ບົດອະທິບາຍ ປະມວນກົດໝາຍແພ່ງ

(ເອກະສານຄົ້ນຄວ້າ)

ຄົ້ນຄວ້າໂດຍ:

ກຸ່ມໂຄສະນາ ແລະ ເຜີຍແຜ່ປະມວນກົດໝາຍແພ່ງ

2023

ບົດອະທິບາຍ
ປະມວນກົດໝາຍແພ່ງ

(ເອກະສານຄົ້ນຄວ້າ)

ໂດຍ ກຸ່ມໂຄສະນາ ແລະ ເຜີຍແຜ່ປະມວນກົດໝາຍແພ່ງ

ໂຄງການສົ່ງເສີມການພັດທະນາ ແລະ ສ້າງຄວາມເຂັ້ມແຂງ ລັດທີ່ປົກຄອງດ້ວຍກົດໝາຍໃນຂົງເຂດຍຸຕິທຳ

ໂດຍການຮ່ວມມື ລະຫວ່າງ ກະຊວງຍຸຕິທຳ, ອົງການໄອຍະການປະຊາຊົນ, ສານປະຊາຊົນ ແລະ ຄະນະ ນິຕິສາດ ແລະ ລັດຖະສາດ, ມະຫາວິທະຍາໄລແຫ່ງຊາດ ກັບ ອົງການຮ່ວມມືສາກົນ ຍີ່ປຸ່ນ (JICA)

ປີ 2023

ຄຳນຳ

ປື້ມບົດອະທິບາຍປະມວນກົດໝາຍແພ່ງສະບັບນີ້, ສ້າງຂຶ້ນບົນພື້ນຖານ ການຄົ້ນຄວ້າວິທະຍາສາດກົດໝາຍ ທີ່ເລິກເຊິ່ງ ພາຍໃຕ້ຄວາມເປັນເອກະພາບຂອງຄະນະນຳສີ່ພາກສ່ວນ ຄື: ສານປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນສູງສຸດ, ກະຊວງຍຸຕິທຳ ແລະ ມະຫາວິທະຍາໄລແຫ່ງຊາດ ຄະນະນິຕິສາດ ແລະ ລັດຖະສາດ ພາຍໃຕ້ໂຄງການສົ່ງເສີມການພັດທະນາ ແລະ ສ້າງຄວາມເຂັ້ມແຂງໃຫ້ລັດທີ່ປົກຄອງດ້ວຍກົດໝາຍໃນຂົງເຂດຍຸຕິທຳ ໄຈກາ (JICA) ປະເທດຍີ່ປຸ່ນ.

ກົດໝາຍແມ່ນການຜັນຂະຫຍາຍແນວທາງນະ�โยบายຂອງພັກ-ລັດ ມາເປັນອັນລະອຽດ. ເຖິງຢ່າງໃດກໍ່ຕາມ ເພື່ອໃຫ້ເຂົ້າໃຈກົດໝາຍຢ່າງເລິກເຊິ່ງ ແລະ ການນຳໃຊ້ ຢ່າງເປັນເອກະພາບ ຈຳເປັນຕ້ອງອອກຄຳແນະນຳ ຫຼື ອະທິບາຍຕື່ມອີກ. ປື້ມບົດອະທິບາຍປະມວນກົດໝາຍແພ່ງສະບັບນີ້ ແນໃສ່ໂຄສະນາ ແລະ ເຜີຍແຜ່ປະມວນກົດໝາຍແພ່ງ ເພື່ອສ້າງຄວາມເຂົ້າໃຈ ກ່ຽວກັບຈຸດປະສົງທາງດ້ານກົດໝາຍ 630 ມາດຕາ ຂອງປະມວນກົດໝາຍແພ່ງ ຢ່າງເອກະພາບພາຍໃນລະດັບສູງ; ທັງເປັນບ່ອນອີງໃຫ້ແກ່ບັນດານັກວິຊາການ, ນັກຄົ້ນຄວ້າ, ຄູ-ອາຈານ,ນັກສຶກສາ, ຜູ້ພິພາກສາ, ພະນັກງານໄອຍະການ, ທະນາຍຄວາມ, ພະນັກງານ, ລັດຖະກອນ, ນັກທຸລະກິດ ແລະ ປະຊາຊົນບັນດາເຜົ່າ ໄດ້ນຳໃຊ້ກົດໝາຍຢ່າງຖືກຕ້ອງ ກັບ ຈຸດປະສົງຂອງການສ້າງປະມວນກົດໝາຍແພ່ງ.

ຫວັງຢ່າງຍິ່ງວ່າ ປື້ມບົດອະທິບາຍປະມວນກົດໝາຍແພ່ງສະບັບນີ້ ຈະເປັນປະ�โยชนຢ່າງຍິ່ງ ເຖິງຢ່າງໃດກໍ່ຕາມ ປື້ມບົດອະທິບາຍປະມວນກົດໝາຍແພ່ງສະບັບນີ້ ກໍອາດປາສະຈາກຂໍ້ບົກຜ່ອງບໍ່ໄດ້, ສະນັ້ນ ຄຳແນະນຳ ຫຼື ຄຳຄິດເຫັນ ຂອງບັນດາທ່ານ ເຫັນວ່າເປັນປະ�โยชนແກ່ການປັບປຸງ ໃຫ້ສົມບູນຍິ່ງໆຂຶ້ນໃນຕໍ່ໜ້າ.

ຮອງອະທິການບໍດີມະຫາວິທະຍາໄລແຫ່ງຊາດ
ຄະນະຊີ້ນຳໂຄງການ, ຜູ້ປະຈຳການ

ສຈ.ປອ ຮຸ່ງເພັດ ຈັນທະວົງ

ຄຳເຫັນ

ຂ້າພະເຈົ້າເຫັນວ່າບົດອະທິບາຍປະມວນກົດໝາຍແພ່ງ ສະບັບນີ້ ເປັນບົດອະທິບາຍທີ່ຊົງຄຸນຄ່າທາງດ້ານວິຊາການ ແລະ ເປັນປະໂຫຍດຢ່າງຍິ່ງສຳລັບປະຊາຊົນທົ່ວໄປ, ພະນັກງານລັດຖະກອນ, ທະຫານ, ຕາຫຼວດ ເວົ້າລວມ, ເວົ້າສະເພາະ ພະນັກງານປົກປ້ອງກົດໝາຍ (ຜູ້ພິພາກສາ, ພະນັກງານໄອຍະການ, ຕຳຫຼວດ, ພະນັກງານຍຸຕິທຳ ແລະ ທະນາຍຄວາມ) ໃຫ້ມີຄວາມເຂົ້າໃຈຄວາມໝາຍຖືກຕ້ອງ ສອດຄ່ອງ ກັບ ເນື້ອໃນຈິດໃຈທີ່ກຳນົດຢູ່ໃນແຕ່ລະມາດຕາຂອງປະມວນກົດໝາຍແພ່ງ, ພ້ອມນີ້ກໍ່ໃຫ້ມີຄວາມເປັນເອກະພາບໃນການຈັດຕັ້ງປະຕິບັດຕົວຈິງ ແນໃສ່ເຮັດໃຫ້ການປົກປ້ອງສິດ ແລະ ຜົນປະໂຫຍດຂອງປະຊາຊົນ ກໍ່ຄືການຈັດຕັ້ງປະຕິບັດປະມວນກົດໝາຍແພ່ງ ໃຫ້ມີປະສິດທິຜົນ ມີຄວາມຈຳເປັນ ແລະ ພາວະວິໄສຢ່າງຍິ່ງ.

ບົດອະທິບາຍປະມວນກົດໝາຍແພ່ງ ສະບັບນີ້ ໄດ້ຖືກສ້າງຂຶ້ນກ່ອນປະມວນກົດໝາຍແພ່ງມີຜົນສັກສິດ ຖ້າຫາກຕົວຢ່າງທີ່ຂຽນໄວ້ໃນບົດອະທິບາຍດັ່ງກ່າວ ສະແດງວັນທີ ກ່ອນປະມວນກົດໝາຍແພ່ງມີຜົນສັກສິດ ໃນວັນທີ 27 ພຶດສະພາ 2020 (ມາດຕາ 630 ວັກ 2) ກະລຸນາພິຈາລະນາວ່າປະມວນກົດໝາຍແພ່ງ ມີຜົນສັກສິດໃຊ້ກັບຕົວຢ່າງນັ້ນ.

ຂ້າພະເຈົ້າຫວັງຢ່າງຍິ່ງວ່າ ບົດອະທິບາຍປະມວນກົດໝາຍແພ່ງນີ້ ຈະກາຍເປັນມໍຣະດົກອັນລ້ຳຄ່າ ເພື່ອປະກອບສ່ວນເຂົ້າໃນການພັດທະນາລັດ ແຫ່ງ ສປປ ລາວ ໃຫ້ກາຍເປັນລັດແຫ່ງກົດໝາຍຂອງປະຊາຊົນ ໂດຍປະຊາຊົນ ແລະ ເພື່ອຜົນປະ�โຫຍດຂອງປະຊາຊົນເທື່ອລະກ້າວ.

ທີ່ປຶກສາກົດໝາຍອາວຸໂສ

ສຈ. ເກດ ກງດຕິສັກ

ຄຳເຫັນ

ບົດອະທິບາຍປະມວນກົດໝາຍແພ່ງ ສະບັບນີ້ ເປັນບົດອະທິບາຍທີ່ຊົງຄຸນຄ່າທາງດ້ານວິຊາການ ແລະ ເປັນປະໂຫຍດຢ່າງຍິ່ງ ສຳລັບປະຊາຊົນທົ່ວໄປ, ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດທີ່ມີຄວາມສົນໃຈ ຊອກຮູ້ຮ່ຳຮຽນ ເວົ້າລວມ, ເວົ້າສະເພາະ ພະນັກງານປົກປ້ອງກົດໝາຍ (ຜູ້ພິພາກສາ, ພະນັກງານໄອຍະການ, ເຈົ້າໜ້າທີ່ສືບສວນ-ສອບສວນ, ພະນັກງານຍຸຕິທຳ ແລະ ທະນາຍຄວາມ) ໃຫ້ມີຄວາມເຂົ້າໃຈເນື້ອໃນຈິດໃຈ ທີ່ໄດ້ກຳນົດໃນແຕ່ລະມາດຕາ ຂອງປະມວນກົດໝາຍແພ່ງຢ່າງຖືກຕ້ອງ ພ້ອມທັງໃຫ້ມີຄວາມເປັນເອກະພາບໃນການຈັດຕັ້ງປະຕິບັດຕົວຈິງ ແນໃສ່ເຮັດໃຫ້ການປົກປ້ອງສິດ ແລະ ຜົນປະ�โຫຍດຂອງປະຊາຊົນລາວບັນດາເຜົ່າ ກໍຄືການນຳໃຊ້ປະມວນກົດໝາຍແພ່ງ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ.

ບົດອະທິບາຍ ປະມວນກົດໝາຍແພ່ງ ສະບັບນີ້ ໄດ້ກຳນົດເອົາຕົວຢ່າງເປັນຫຼັກ ໃນການຊີ້ແຈງ ແລະ ໃຫ້ຄວາມຊັດເຈນໂດຍພື້ນຖານ ກ່ຽວກັບເນື້ອໃນຂອງແຕ່ລະມາດຕາ ແຕ່ເຖິງຢ່າງໃດ ກໍເຊື່ອແນ່ວ່າ ໃນອະນາຄົດຄົງຈະມີການປັບປຸງບາງຕົວຢ່າງ ທີ່ເຫັນວ່າບໍ່ແທດເໝາະ ແລະ ໜັກແໜ້ນເທົ່າທີ່ຄວນ.

ຂ້າພະເຈົ້າ ຫວັງຢ່າງຍິ່ງວ່າ ບົດອະທິບາຍປະມວນກົດໝາຍແພ່ງນີ້ ຈະກາຍເປັນມໍຣະດົກອັນລ້ຳຄ່າ ເພື່ອປະກອບສ່ວນເຂົ້າໃນການເສີມສ້າງ ແລະ ພັດທະນາລະບົບກົດໝາຍຂອງ ສປປ ລາວ ກໍຄືການສ້າງລັດ ສປປ ລາວ ໃຫ້ເປັນລັດທີ່ປົກຄອງດ້ວຍກົດໝາຍຢ່າງແທ້ຈິງ.

ທີ່ປຶກສາກົດໝາຍອາວຸໂສ

ສຈ. ດາວອນ ຫວ່າງວິຈິດ

ຄຳເຫັນຂອງຫົວໜ້າຄະນະຄົ້ນຄວ້າ

ຂ້າພະເຈົ້າ, ໃນນາມຫົວໜ້າຄະນະຄົ້ນຄວ້າ ປື້ມບົດອະທິບາຍປະມວນກົດໝາຍແພ່ງ ຮູ້ສຶກພາກພູມໃຈ ແລະ ເປັນກຽດທີ່ສຸດ ທີ່ທາງຄະນະພັກ-ຄະນະນຳ ຈາກ 4 ພາກສ່ວນ ກໍຄື ກະຊວງຍຸຕິທຳ, ສານປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນສູງສຸດ ແລະ ມະຫາວິທະຍາໄລແຫ່ງຊາດໄດ້ໄວ້ວາງໃຈ ແລະ ມອບໝາຍໃຫ້ຄະນະພວກເຮົາຮັບຜິດຊອບຄົ້ນຄວ້າ ແລະ ສ້າງປື້ມບົດອະທິບາຍປະມວນກົດໝາຍແພ່ງ ນັບແຕ່ປີ 2017 ເປັນຕົ້ນມາ. ການພັດທະນາບົດອະທິບາຍກົດໝາຍ ເປັນວຽກງານໃໝ່ຜ່ານມາຍັງບໍ່ທັນໄດ້ຄົ້ນຄວ້າ ທາງດ້ານວິຊາການທີ່ເລິກເຊິ່ງລັກສະນະນີ້ເທື່ອ ແລະ ບົດຮຽນໃນການຄົ້ນຄວ້າ ຂອງຄະນະພວກເຮົາກໍມີຈຳກັດທີ່ສຸດ, ດັ່ງນັ້ນ ວຽກງານນີ້ ຈຶ່ງເປັນສິ່ງທີ່ທ້າທາຍທີ່ສຸດ ສຳລັບຄະນະພວກເຮົາ, ບົນພື້ນຖານ "**ທັງຮຽນ ທັງເຮັດ**" ຜ່ານການແລກປ່ຽນບົດຮຽນ ແລະ ຮຽນຮູ້ຈາກ ບັນດານັກວິຊາການກົດໝາຍອາວຸໂສຂອງລາວ, ສາດສະດາຈານກົດໝາຍແພ່ງ ຈາກປະເທດຍີ່ປຸ່ນ ແລະ ຊ່ຽວຊານ ຂອງອົງການໄຈກາ ໂດຍຜ່ານການສຳມະນາແລກປ່ຽນ ແລະ ຖອດຖອນບົດຮຽນຫຼາຍກວ່າ 30 ຄັ້ງ ຮອດປີ 2022 ຈຶ່ງສຳເລັດການພັດທະນາປື້ມບົດອະທິບາຍປະມວນກົດໝາຍແພ່ງໂດຍພື້ນຖານ.

ປື້ມບົດອະທິບາຍປະມວນກົດໝາຍແພ່ງ ເປັນເອກະສານຄົ້ນຄວ້າທາງດ້ານວິຊາການ ໃນການອະທິບາຍ ເນື້ອໃນແຕ່ລະມາດຕາ ຂອງປະມວນກົດໝາຍແພ່ງ ເພື່ອເປັນບ່ອນອີງໃຫ້ປະຊາຊົນທົ່ວໄປ, ພະນັກງານລັດຖະກອນ, ທະຫານ, ຕຳຫຼວດ ເວົ້າລວມ, ເວົ້າສະເພາະ ພະນັກງານປົກປ້ອງກົດໝາຍ (ຜູ້ພິພາກສາ, ພະນັກງານໄອຍະການ, ຕຳຫຼວດ, ພະນັກງານຍຸຕິທຳ ແລະ ທະນາຍຄວາມ) ໄດ້ເຂົ້າໃຈເນື້ອໃນ ຈຸດປະສົງຂໍ້ກຳນົດ ແຕ່ລະມາດຕາ ຂອງປະມວນກົດໝາຍແພ່ງ.

ເຖິງຢ່າງໃດກໍຕາມ ຍ້ອນວ່າເປັນວຽກງານໃໝ່ ແລະ ປະສົບການໃນການຄົ້ນຄວ້າກໍຍັງບໍ່ສູງ ຈຶ່ງປາສະຈາກບໍ່ໄດ້ຂໍ້ຂາດຕົກບົກຜ່ອງ ໃນການອະທິບາຍ ທັງກໍລະນີສຶກສາ ກໍອາດບໍ່ສອດຄ່ອງກັບຕົວຈິງ ແຕ່ກໍຫວັງຢ່າງຍິ່ງວ່າບັນດາທ່ານຜູ້ອ່ານ ຈະໄດ້ຮັບປະໂຫຍດບໍ່ຫຼາຍກໍໜ້ອຍ ຈາກປື້ມບົດອະທິບາຍປະມວນກົດໝາຍແພ່ງສະບັບນີ້, ພວກຂ້າພະເຈົ້າ ຂໍຮັບເອົາຄຳຕຳນິຕິຊົມຈາກບັນດາທ່ານ ເພື່ອຈະນຳມາປັບປຸງ ໃຫ້ອຸດົມສົມບູນຍິ່ງໆຂຶ້ນໄປໃນຕໍ່ໜ້າ.

ໃນໂອກາດນີ້ ຂ້າພະເຈົ້າ ໃນນາມຕາງໜ້າຄະນະຄົ້ນຄວ້າ ຂໍສະແດງຄວາມຂອບໃຈມາຍັງສາດສະດາຈານກົດໝາຍລາວ, ກົດໝາຍແພ່ງຈາກປະເທດຍີ່ປຸ່ນ, ຊ່ຽວຊານຂອງອົງການໄຈກາ ແລະ ປະຊາຊົນ ກໍຄືລັດຖະບານຍີ່ປຸ່ນ ທີ່ໄດ້ໃຫ້ການຊ່ວຍເຫຼືອອັນມີຄ່າໃຫ້ແກ່ ສ ປປ ລາວ ໃນການພັດທະນາຂົງເຂດເຂດຍຸຕິທຳ ທາງດ້ານເຕັກນິກວິຊາການ ແລະ ທຶນຮອນໃນການສ້າງປື້ມບົດອະທິບາຍປະມວນກົດໝາຍແພ່ງ ຈົນສຳເລັດຜົນ.

ຫົວໜ້າຫ້ອງການ

ຫົວໜ້າຄະນະຄົ້ນຄວ້າບົດອະທິບາຍປະມວນກົດໝາຍແພ່ງ

ນະລົງລິດ ນໍລະສິງ

ທີ່ປຶກສາກົດໝາຍອາວຸໂສ

ທ່ານ ສຈ. ເກດ ກຽດຕິສັກ	ພະນັກງານບຳນານ, ອະດີດລັດຖະມົນຕີກະຊວງຍຸຕິທຳ;
ທ່ານ ສຈ. ດາວອນ ຫວ່າງວິຈິດ	ພະນັກງານບຳນານ, ອະດີດປະທານກຳມະທິການກົດໝາຍ, ສະພາແຫ່ງຊາດ.

ຄະນະຊີ້ນຳໂຄງການ

ທ່ານ ປອ. ເສີມສຸກ ສົມພະວົງ	ພະນັກງານບຳນານ, ອະດີດຮອງລັດຖະມົນຕີກະຊວງຍຸຕິທຳ;
ທ່ານ ບຸນສະຫວາດ ບຸບຜາ	ພະນັກງານບຳນານ, ອະດີດຮອງລັດຖະມົນຕີກະຊວງຍຸຕິທຳ;
ທ່ານ ໄຊຊະນະ ໂຄດພູທອນ	ຫົວໜ້າອົງການໄອຍະການປະຊາຊົນສູງສຸດ;
ທ່ານ ເກດສະໜາ ພົມມະຈັນ	ຮອງລັດຖະມົນຕີ ກະຊວງຍຸຕິທຳ;
ທ່ານ ບຸນຂວາງ ທະວີສັກ	ຮອງປະທານສານປະຊາຊົນສູງສຸດ;
ທ່ານ ຄຳເພັດ ສົມວໍລະຈິດ	ຮອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ;
ທ່ານ ສຈ. ປອ. ຮຸ່ງເພັດ ຈັນທະວົງ	ຮອງອະທິການບໍດີ ມະຫາວິທະຍາໄລແຫ່ງຊາດ.

ຄະນະບໍລິຫານງານໂຄງການ

ທ່ານ ນະລົງລິດ ນໍລະສິງ	ຫົວໜ້າຫ້ອງການ ກະຊວງຍຸຕິທຳ;
ທ່ານ ຈັນທະລີ ດວງວິໄລ	ຜູ້ພິພາກສາອາວຸໂສ ສານປະຊາຊົນສູງສຸດ;
ທ່ານ ບົວລີ ເພັດມີໄຊ	ຫົວໜ້າກົມຕິດຕາມ ກວດກາການດຳເນີນຄະດີແພ່ງ ອົງການໄອຍະການ ປະຊາຊົນສູງສຸດ;
ທ່ານ ຮສ. ປອ. ວຽງວິໄລ ທ່ຽງຈັນໄຊ	ຄະນະບໍດີ ຄະນະນິຕິສາດ ແລະ ລັດຖະສາດ ມະຫາວິທະຍາໄລແຫ່ງຊາດ.

ຄະນະຄົ້ນຄວ້າ ແລະ ຮຽບຮຽງໂດຍ:

ທ່ານ ນາງ ດວງມະນີ ລາວມາວ	ກະຊວງຍຸຕິທຳ
ທ່ານ ນາງ ຄອນສະຫວັນ ສາວະລີ	ກະຊວງຍຸຕິທຳ
ທ່ານ ນາງ ສາຍຄົດ ວິສີສົມບັດ	ກະຊວງຍຸຕິທຳ
ທ່ານ ສີວິໄຊ ປະສານພອນ	ກະຊວງຍຸຕິທຳ
ທ່ານ ນາງ ຈິດຕະສອນ ບຸນຄົງ	ກະຊວງຍຸຕິທຳ
ທ່ານ ນາງ ລັດສະໝີ ສີສະໝຸດ	ກະຊວງຍຸຕິທຳ
ທ່ານ ນາງ ຄຳໄຜ່ ໄຊຍະວົງ	ກະຊວງຍຸຕິທຳ
ທ່ານ ນາງ ສຸວັນໄຊ ສົງດາລາ	ກະຊວງຍຸຕິທຳ
ທ່ານ ນາງ ເຂັມແກ້ວ ເລື່ອນວິໄລ	ກະຊວງຍຸຕິທຳ
ທ່ານ ນາງ ດາວພະຕ່າ ອະນຸວົງ	ກະຊວງຍຸຕິທຳ
ທ່ານ ຫົງເຊັງ ເລົ່າໄຊເຊີ	ກະຊວງຍຸຕິທຳ
ທ່ານ ນາງ ຈັນດາວອນ ວົງພະຈັນ	ກະຊວງຍຸຕິທຳ
ທ່ານ ສົມຊາຍ ແສນສູນທອນ	ກະຊວງຍຸຕິທຳ
ທ່ານ ສີສະຫວັນ ຫຼວງລາດ	ສານປະຊາຊົນສູງສຸດ
ທ່ານ ຄູນ ຜາສຸກ	ສານປະຊາຊົນສູງສຸດ
ທ່ານ ສົມສັກ ໄຕບຸນລັກ	ອະດີດຜູ້ພິພາກສາຊັ້ນ 4 ສານປະຊາຊົນສູງສຸດ
ທ່ານ ທະນົງສັກ ຣາຊະພົນ	ສານປະຊາຊົນສູງສຸດ
ທ່ານ ຄຳໄຜ່ ໄຊຍະສຸກ	ສານປະຊາຊົນສູງສຸດ
ທ່ານ ອັກສອນສົນ ວິໄຊຍະໄລ	ສານປະຊາຊົນສູງສຸດ
ທ່ານ ຊາຍ ໄຊຍະເດດ	ສານປະຊາຊົນສູງສຸດ

ທ່ານ ອະນຸສອນ ສຸລິຍາ	ສານປະຊາຊົນສູງສຸດ
ທ່ານ ລ້ານ ກອງປະເສີດ	ສານປະຊາຊົນສູງສຸດ
ທ່ານ ນາງ ພາວັນ ອຸດົມໄຊ	ສານປະຊາຊົນສູງສຸດ
ທ່ານ ນາງ ສົມສະໜິດ ຫານມະນີ	ສານປະຊາຊົນສູງສຸດ
ທ່ານ ນາງ ເພັດພູວອນ ແສນສີ	ອົງການໄອຍະການປະຊາຊົນສູງສຸດ
ທ່ານ ຄຳຄິດ ຈັນສີ	ອົງການໄອຍະການປະຊາຊົນສູງສຸດ
ທ່ານ ສີບຸນຊົມ ບຸລົມ	ອົງການໄອຍະການປະຊາຊົນສູງສຸດ
ທ່ານ ຄຳມ່ວນ ສີວິໄລ	ອົງການໄອຍະການປະຊາຊົນສູງສຸດ
ທ່ານ ເກດມະນີ ຈັນໄຕທິບ	ອົງການໄອຍະການປະຊາຊົນສູງສຸດ
ທ່ານ ທິບພະສອນ ລາດຊະວົງໄຊ	ອົງການໄອຍະການປະຊາຊົນສູງສຸດ
ທ່ານ ແສງເພັດ ວົງໄຊ	ອົງການໄອຍະການປະຊາຊົນສູງສຸດ
ທ່ານ ນາງ ພຽນພານິດ ເລືອງບຸນມີ	ອົງການໄອຍະການປະຊາຊົນສູງສຸດ
ທ່ານ ນາງ ຄຳພູນ ພິລາວົງ	ອົງການໄອຍະການປະຊາຊົນສູງສຸດ
ທ່ານ ສຸມິດ ສີທອງມູນ	ອົງການໄອຍະການປະຊາຊົນສູງສຸດ
ທ່ານ ບຸນຄົງ ເພັດດາວຮຸ່ງ	ຄະນະນິຕິສາດ ແລະ ລັດຖະສາດ ມະຫາວິທະຍາໄລແຫ່ງຊາດ
ທ່ານ ວິໄຊ ສີຫາປັນຍາ	ຄະນະນິຕິສາດ ແລະ ລັດຖະສາດ ມະຫາວິທະຍາໄລແຫ່ງຊາດ
ທ່ານ ທອງຄຳ ລໍ່ຢາງ	ຄະນະນິຕິສາດ ແລະ ລັດຖະສາດ ມະຫາວິທະຍາໄລແຫ່ງຊາດ
ທ່ານ ຜູໄຊ ຈັນທະວົງ	ຄະນະນິຕິສາດ ແລະ ລັດຖະສາດ ມະຫາວິທະຍາໄລແຫ່ງຊາດ
ທ່ານ ນາງ ຄຳຜິວ ວິໄລພອນ	ຄະນະນິຕິສາດ ແລະ ລັດຖະສາດ ມະຫາວິທະຍາໄລແຫ່ງຊາດ
ທ່ານ ນາງ ວິສຸດາ ຈອມມະນີຈັນ	ຄະນະນິຕິສາດ ແລະ ລັດຖະສາດ ມະຫາວິທະຍາໄລແຫ່ງຊາດ
ທ່ານ ແກ້ວພິລາ ອະນຸວົງ	ຄະນະນິຕິສາດ ແລະ ລັດຖະສາດ ມະຫາວິທະຍາໄລແຫ່ງຊາດ
ທ່ານ ອຳໄພ ຈິດມານິນ	ສະພາແຫ່ງຊາດ
ທ່ານ ນາງ ຖະໜອມຈິດ ໂຄດພູທອນ	ສະພາແຫ່ງຊາດ
ທ່ານ ສະຖິດ ສຸທຳມະໂກດ	ກະຊວງອຸດສາຫະກຳ ແລະ ການຄ້າ
ທ່ານ ຫົງສາ ອິນທິລາດ	ກະຊວງການຕ່າງປະເທດ
ທ່ານ ສຸດໃຈ ວັນນະສິນ	ກະຊວງການຕ່າງປະເທດ

ຄະນະທີ່ປຶກສາຝ່າຍຍີ່ປຸ່ນ (Advisors from Japanese Side)

1.	ທ່ານ ຮິໂຮຊິ ມະຊຶໂອະ	Mr. Hiroshi Matsuo (Keio University)
2.	ທ່ານ ມາສະມິຈິ ໂນຊາວະ	Mr. Masamichi Nozawa, (Rikkyo University)
3.	ທ່ານ ຊາໂຕຊິ ມິນາມິກາຕະ	Mr. Satoshi Minamikata (Niigata University)
4.	ທ່ານ ນາງ ຢາຈິໂກະ ຢາມາດະ	Ms.Yachiko Yamada (Chuo University)
5.	ທ່ານ ເຄັນໂຊ ໂອກະວະ	Mr. Kenzo Okawa (Setsunan University)
6.	ທ່ານ ຮິໂຮຢູກິ ເຊໂຕະ	Mr. Hiroyuki Seto (Niigata University of International
7.	ຄະນະອາຈານຈາກພະແນກຮ່ວມມືສາກົນຂອງ ສະຖາບັນຄົ້ນຄວ້າ ແລະ ຝຶກອົບຮົມ (ກະຊວງ ຍຸຕິທຳ ຍີ່ປຸ່ນ)	ICD Professors (Ministry of Justice, Japan)
8.	ທ່ານ ໂອຊາມຸ ອິຊິໂອຄະ	Mr. Osamu Ishioka (Former JICA Legal Expert)
9.	ທ່ານ ຄະຊຸໂນຣິ ອິຣິເອະ	Mr. Katsunori Irie (Former JICA Legal Expert)
10.	ທ່ານ ອາກິທະກະ ອາຊຳໂບ	Mr. Akitaka Asambo (JICA Legal Expert)

ສາລະບານ

ພາກທີ I ບົດບັນຍັດທົ່ວໄປ.....2
ໝວດທີ 1 ຈຸດປະສົງ ແລະ ຂອບເຂດການນຳໃຊ້ປະມວນກົດໝາຍແພ่ງ.....2
ມາດຕາ 1 ຈຸດປະສົງຂອງປະມວນກົດໝາຍແພ่ງ.....2
ມາດຕາ 2 ປະມວນກົດໝາຍແພ่ງ.....3
ມາດຕາ 3 ການອະທິບາຍຄຳສັບ.....4
ມາດຕາ 4 ນະໂຍບາຍກ່ຽວກັບປະມວນກົດໝາຍແພ่ງ.....5
ມາດຕາ 5 ການນຳໃຊ້ປະມວນກົດໝາຍແພ่ງ ແລະ ກົດໝາຍອື່ນ.....6
ມາດຕາ 6 ການນຳໃຊ້ປະເພນີປະຕິບັດ ແລະ ບົດບັນຍັດທີ່ຄ້າຍຄຽງຂອງກົດໝາຍ.....7
ມາດຕາ 7 ຂອບເຂດການນຳໃຊ້ປະມວນກົດໝາຍແພ่ງ.....8
ໝວດທີ 2 ຫຼັກການພື້ນຖານຂອງປະມວນກົດໝາຍແພ่ງ.....10
ມາດຕາ 8 ຫຼັກການພື້ນຖານຂອງສາຍພົວພັນທາງແພ่ງ.....10
ມາດຕາ 9 ການເຄົາລົບສິດເສລີພາບ ແລະ ຄວາມສະໝັກໃຈ.....12
ມາດຕາ 10 ຄວາມສະເໝີພາບຕໍ່ໜ້າກົດໝາຍ.....13
ມາດຕາ 11 ເຈດຕະນາດີ ແລະ ຄວາມບໍລິສຸດໃຈ.....14
ມາດຕາ 12 ການເຄົາລົບ ແລະ ປະຕິບັດກົດໝາຍ.....15
ມາດຕາ 13 ການເຄົາລົບ ແລະ ນັບຖືອົດຄອງປະເພນີອັນດີງາມຂອງຊາດ.....16
ມາດຕາ 14 ຄວາມຮັບຜິດຊອບຕໍ່ຄວາມເສຍຫາຍທາງແພ่ງ.....16
ໝວດທີ 3 ນິຕິກຳ.....17
ມາດຕາ 15 ນິຕິກຳ.....17
ມາດຕາ 16 ປະເພດນິຕິກຳ.....18
ມາດຕາ 17 ເງື່ອນໄຂຂອງນິຕິກຳ.....19
ມາດຕາ 18 ວັດຖຸປະສົງ.....20
ມາດຕາ 19 ຄວາມສະໝັກໃຈ.....21
ມາດຕາ 20 ຄວາມສາມາດທາງດ້ານການປະພຶດ.....24
ມາດຕາ 21 ຮູບການ.....25
ມາດຕາ 22 ນິຕິກຳເປັນໂມຄະ.....26
ມາດຕາ 23 ນິຕິກຳເປັນໂມຄະເດັດຂາດ.....27
ມາດຕາ 24 ນິຕິກຳເປັນໂມຄະບໍ່ເດັດຂາດ.....30
ມາດຕາ 25 ນິຕິກຳເປັນໂມຄະທັງໝົດ ຫຼື ບາງສ່ວນ.....33
ມາດຕາ 26 ການຢັ້ງຢືນຄວາມເປັນໂມຄະເດັດຂາດຂອງນິຕິກຳ.....34
ມາດຕາ 27 ການຂໍລົບລ້າງນິຕິກຳເປັນໂມຄະບໍ່ເດັດຂາດ.....35
ມາດຕາ 28 ຜົນສະທ້ອນຂອງນິຕິກຳເປັນໂມຄະ.....36
ມາດຕາ 29 ນິຕິກຳທີ່ມີເຫດການເປັນເງື່ອນໄຂ.....38
ມາດຕາ 30 ນິຕິກຳທີ່ມີເວລາເປັນເງື່ອນໄຂ.....40
ໝວດທີ 4 ການຕາງໜ້າ.....41

ມາດຕາ 31 ການຕາງໜ້າ.....41
ມາດຕາ 32 ການຕາງໜ້າຕາມກົດໝາຍ.....42
ມາດຕາ 33 ການຕາງໜ້າຕາມສັນຍາ.....44
ມາດຕາ 34 ເງື່ອນໄຂແລະຜົນຂອງນິຕິກຳຕໍ່ຜູ້ຖືກຕາງໜ້າ.....44
ມາດຕາ 35 ນິຕິກຳ ທີ່ສ້າງຂຶ້ນໂດຍອອກຊື່ຂອງຜູ້ຕາງໜ້າ.....45
ມາດຕາ 36 ສິດ ແລະ ພັນທະຂອງຜູ້ຕາງໜ້າ.....46
ມາດຕາ 37 ສິດ ແລະ ພັນທະຂອງຜູ້ຖືກຕາງໜ້າ.....47
ມາດຕາ 38 ຜູ້ຕາງໜ້າແທນ.....48
ມາດຕາ 39 ສິດ ແລະ ພັນທະຂອງຜູ້ຕາງໜ້າແທນ.....50
ມາດຕາ 40 ຜົນຂອງນິຕິກຳທີ່ເຮັດຂຶ້ນໂດຍຜູ້ບໍ່ມີສິດເປັນຜູ້ຕາງໜ້າ.....50
ມາດຕາ 41 ຜົນຂອງການເຮັດນິຕິກຳເກີນຂອບເຂດຂອງຜູ້ຕາງໜ້າ.....52
ມາດຕາ 42 ການສິ້ນສຸດການຕາງໜ້າ.....54
ໝວດທີ 5 ໄລຍະເວລາ.....56
ມາດຕາ 43 ໄລຍະເວລາ.....56
ມາດຕາ 44 ການກຳນົດໄລຍະເວລາ.....57
ມາດຕາ 45 ການກຳນົດຂອບເຂດເວລາ.....58
ມາດຕາ 46 ການນຳໃຊ້ ແລະ ການຄິດໄລ່ໄລຍະເວລາ.....59
ມາດຕາ 47 ການເລີ່ມນັບໄລຍະເວລາ.....60
ມາດຕາ 48 ການສິ້ນສຸດໄລຍະເວລາ.....62
ໝວດທີ 6 ອາຍຸຄວາມ.....64
ກ. ອາຍຸຄວາມ.....64
ມາດຕາ 49 ອາຍຸຄວາມ.....64
ມາດຕາ 50 ປະເພດອາຍຸຄວາມ.....65
ມາດຕາ 51 ອາຍຸຄວາມໄດ້ສິດ.....65
ມາດຕາ 52 ອາຍຸຄວາມເສຍສິດ.....66
ມາດຕາ 53 ການພິຈາລະນາກ່ຽວກັບອາຍຸຄວາມ.....67
ມາດຕາ 54 ການບໍ່ອະນຸຍາດໃຫ້ປ່ຽນແປງອາຍຸຄວາມ.....68
ມາດຕາ 55 ການຮັບຮູ້ໜີ້ສິນ ຫຼື ພັນທະອື່ນພາຍຫຼັງໝົດອາຍຸຄວາມ.....68
ມາດຕາ 56 ການບໍ່ມີອາຍຸຄວາມ.....71
ຂ. ການນັບອາຍຸຄວາມ.....72
ມາດຕາ 57 ການນັບອາຍຸຄວາມ.....72
ມາດຕາ 58 ການນັບອາຍຸຄວາມດ້ວຍການຄອບຄອງຕໍ່ ຂອງບຸກຄົນຜູ້ໃໝ່.....73
ຄ. ການໂຈະ ແລະ ການຢຸດສະງັກ.....74
ມາດຕາ 59 ການໂຈະອາຍຸຄວາມ.....74
ມາດຕາ 60 ສາເຫດຂອງການໂຈະອາຍຸຄວາມ.....75
ມາດຕາ 61 ການຢຸດສະງັກຂອງອາຍຸຄວາມ.....76

ມາດຕາ 62 ຜົນສະທ້ອນຂອງການຢຸດສະງັກອາຍຸຄວາມ.....77
ພາກທີ II ບຸກຄົນ ແລະ ນິຕິບຸກຄົນ.....80
ໝວດທີ 1 ບຸກຄົນ.....80
ກ. ຄວາມສາມາດທາງດ້ານກົດໝາຍຂອງບຸກຄົນ.....80
ມາດຕາ 63 ຄວາມສາມາດທາງດ້ານກົດໝາຍຂອງບຸກຄົນ.....80
ມາດຕາ 64 ເນື້ອໃນຂອງຄວາມສາມາດທາງດ້ານກົດໝາຍຂອງບຸກຄົນ.....81
ຂ. ສິດສ່ວນບຸກຄົນ.....82
ມາດຕາ 65 ສິດສ່ວນບຸກຄົນ.....82
ມາດຕາ 66 ການປົກປ້ອງສິດສ່ວນບຸກຄົນ.....82
ຄ. ຄວາມສາມາດທາງດ້ານການປະພຶດຂອງບຸກຄົນ.....83
ມາດຕາ 67 ຄວາມສາມາດທາງດ້ານການປະພຶດຂອງບຸກຄົນ.....83
ມາດຕາ 68 ຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດ.....84
ມາດຕາ 69 ຜູ້ພົ້ນກະສຽນອາຍຸ ແລະ ຜູ້ບໍ່ພົ້ນກະສຽນອາຍຸ.....85
ມາດຕາ 70 ຜູ້ຖືກຈຳກັດຄວາມສາມາດທາງດ້ານການປະພຶດ.....86
ມາດຕາ 71 ຜູ້ເສຍຄວາມສາມາດທາງດ້ານການປະພຶດ.....86
ມາດຕາ 72 ການເຂົ້າຮ່ວມໃນສາຍພົວພັນທາງແພ່ງຂອງເດັກ.....87
ມາດຕາ 73 ການດຳເນີນທຸລະກິດຂອງເດັກ.....88
ມາດຕາ 74 ການອອກແຮງງານຂອງເດັກ.....88
ມາດຕາ 75 ການຮ້ອງຂໍໃຫ້ຮັບຮູ້ວ່າເປັນຜູ້ຖືກຈຳກັດ ຫຼື ຜູ້ເສຍຄວາມສາມາດທາງດ້ານການປະ
ພຶດ.....89
ມາດຕາ 76 ຜົນຂອງການຮັບຮູ້ເປັນຜູ້ຖືກຈຳກັດຄວາມສາມາດທາງດ້ານການປະພຶດ.....90
ມາດຕາ 77 ຜົນຂອງການຮັບຮູ້ວ່າເປັນຜູ້ເສຍຄວາມສາມາດທາງດ້ານການປະພຶດ.....91
ງ. ການຄຸ້ມຄອງ ຜູ້ຖືກຈຳກັດ ຫຼື ຜູ້ເສຍຄວາມສາມາດທາງດ້ານປະພຶດ.....92
ມາດຕາ 78 ການຄຸ້ມຄອງຜູ້ຖືກຈຳກັດ ຫຼື ຜູ້ເສຍຄວາມສາມາດທາງດ້ານການປະພຶດ.....92
ມາດຕາ 79 ເງື່ອນໄຂຂອງການເປັນຜູ້ຄຸ້ມຄອງຕາມຄຳຕັດສິນຂອງສານ.....85
ມາດຕາ 80 ສິດ ແລະ ພັນທະຂອງຜູ້ຄຸ້ມຄອງ.....94
ມາດຕາ 81 ການປົດ, ການຂໍຖອນ ຫຼື ປ່ຽນຜູ້ຄຸ້ມຄອງ.....95
ມາດຕາ 82 ການມອບການຄຸ້ມຄອງ.....97
ມາດຕາ 83 ການສິ້ນສຸດການຄຸ້ມຄອງ.....98
ມາດຕາ 84 ຜົນຂອງການສິ້ນສຸດການຄຸ້ມຄອງ.....99
ຈ. ບ່ອນຢູ່.....100
ມາດຕາ 85 ບ່ອນຢູ່.....100
ມາດຕາ 86 ບ່ອນຢູ່ຂອງຜູ້ບໍ່ພົ້ນກະສຽນອາຍຸ.....100
ມາດຕາ 87 ບ່ອນຢູ່ຂອງຜູ້ຖືກປົກຄອງ.....101
ມາດຕາ 88 ບ່ອນຢູ່ຂອງຜົວເມຍ.....101
ມາດຕາ 89 ບ່ອນຢູ່ຂອງທະຫານ, ຕຳຫຼວດ.....102

ມາດຕາ 90 ບ່ອນຢູ່ຂອງນັກໂທດ.....103
ມາດຕາ 91 ບ່ອນຢູ່ຂອງຄົນຕ່າງປະເທດ, ຄົນຕ່າງດ້າວ ຫຼື ຄົນບໍ່ມີສັນຊາດ.....103
ສ. ການຫາຍສາບສູນ ແລະ ການເສຍຊີວິດຕາມຄຳຕັດສິນຂອງສານ.....104
ມາດຕາ 92 ການຫາຍສາບສູນ.....104
ມາດຕາ 93 ຜູ້ມີສິດຮ້ອງຂໍໃຫ້ປະກາດວ່າບຸກຄົນໃດໜຶ່ງເປັນຜູ້ຫາຍສາບສູນ.....106
ມາດຕາ 94 ການຈົດທະບຽນການຫາຍສາບສູນ.....107
ມາດຕາ 95 ຜົນຂອງການປະກາດວ່າເປັນຜູ້ຫາຍສາບສູນ.....108
ມາດຕາ 96 ການລົບລ້າງການປະກາດວ່າເປັນຜູ້ຫາຍສາບສູນ.....109
ມາດຕາ 97 ການເສຍຊີວິດຕາມຄຳຕັດສິນຂອງສານ.....111
ມາດຕາ 98 ຜູ້ມີສິດຮ້ອງຂໍໃຫ້ປະກາດວ່າບຸກຄົນໃດໜຶ່ງເປັນຜູ້ເສຍຊີວິດ.....112
ມາດຕາ 99 ການຈົດທະບຽນການເສຍຊີວິດຕາມຄຳຕັດສິນຂອງສານ.....113
ມາດຕາ 100 ຜົນຂອງການປະກາດວ່າເປັນຜູ້ເສຍຊີວິດຕາມຄຳຕັດສິນຂອງສານ.....114
ມາດຕາ 101 ການລົບລ້າງການປະກາດວ່າເປັນຜູ້ເສຍຊີວິດ.....115
ໝວດທີ 2 ນິຕິບຸກຄົນ.....116
ກ. ຫຼັກການທົ່ວໄປ.....116
ມາດຕາ 102 ນິຕິບຸກຄົນ.....116
ມາດຕາ 103 ຄວາມສາມາດທາງດ້ານກົດໝາຍຂອງນິຕິບຸກຄົນ.....117
ມາດຕາ 104 ຄວາມສາມາດທາງດ້ານການປະພຶດຂອງນິຕິບຸກຄົນ.....118
ມາດຕາ 105 ການສ້າງຕັ້ງນິຕິບຸກຄົນ.....119
ມາດຕາ 106 ນິຕິບຸກຄົນທີ່ສ້າງຕັ້ງຂຶ້ນດ້ວຍການລວມຕົວຂອງບຸກຄົນ.....119
ມາດຕາ 107 ນິຕິບຸກຄົນທີ່ສ້າງຕັ້ງຂຶ້ນດ້ວຍການລວມຊັບ.....120
ມາດຕາ 108 ກົດລະບຽບຂອງນິຕິບຸກຄົນ.....121
ມາດຕາ 109 ຊື່ຂອງນິຕິບຸກຄົນ.....122
ມາດຕາ 110 ບ່ອນຢູ່ຂອງນິຕິບຸກຄົນ.....123
ມາດຕາ 111 ໂຄງປະກອບການຈັດຕັ້ງ ແລະ ການຄຸ້ມຄອງບໍລິຫານນິຕິບຸກຄົນ.....123
ມາດຕາ 112 ຕົວແທນຂອງນິຕິບຸກຄົນ.....124
ມາດຕາ 113 ການປ່ຽນຕົວແທນຂອງນິຕິບຸກຄົນ.....126
ມາດຕາ 114 ການພົ້ນຈາກການເປັນຕົວແທນຂອງນິຕິບຸກຄົນ.....127
ມາດຕາ 115 ຄວາມຮັບຜິດຊອບຂອງນິຕິບຸກຄົນ.....128
ມາດຕາ 116 ການປ່ຽນແປງນິຕິບຸກຄົນ.....129
ມາດຕາ 117 ການຄວບນິຕິບຸກຄົນ.....129
ມາດຕາ 118 ການແຍກນິຕິບຸກຄົນ.....130
ມາດຕາ 119 ການຍຸບເລີກນິຕິບຸກຄົນ.....130
ມາດຕາ 120 ການຊຳລະສະສາງ.....131
ຂ. ສະມາຄົມ.....132
ມາດຕາ 121 ສະມາຄົມ.....132

ມາດຕາ 122 ຖານະນິຕິບຸກຄົນຂອງສະມາຄົມ.....132
ມາດຕາ 123 ປະເພດ ແລະ ຂອບເຂດການເຄື່ອນໄຫວຂອງສະມາຄົມ.....133
ມາດຕາ 124 ເງື່ອນໄຂການສ້າງຕັ້ງສະມາຄົມ.....134
ມາດຕາ 125 ການຂໍສ້າງຕັ້ງ ສະມາຄົມ 135
ມາດຕາ 126 ກົດລະບຽບຂອງສະມາຄົມ.....136
ມາດຕາ 127 ໂຄງປະກອບການຈັດຕັ້ງ ແລະ ການຄຸ້ມຄອງບໍລິຫານຂອງສະມາຄົມ.....136
ມາດຕາ 128 ກອງປະຊຸມໃຫຍ່ ຂອງສະມາຄົມ.....137
ມາດຕາ 129 ການຄວບ, ການແຍກ ແລະ ການຍຸບເລີກສະມາຄົມ.....138
ຄ. ມູນນິທິ.....138
ມາດຕາ 130 ມູນນິທິ.....138
ມາດຕາ 131 ຂອບເຂດການເຄື່ອນໄຫວຂອງມູນນິທິ.....139
ມາດຕາ 132 ເງື່ອນໄຂການສ້າງຕັ້ງມູນນິທິ.....141
ມາດຕາ 133 ການຂໍສ້າງຕັ້ງມູນນິທິ.....142
ມາດຕາ 134 ກົດລະບຽບຂອງມູນນິທິ.....142
ມາດຕາ 135 ໂຄງປະກອບການຈັດຕັ້ງ ແລະ ການຄຸ້ມຄອງບໍລິຫານຂອງມູນນິທິ.....143
ມາດຕາ 136 ການຄວບ, ການແຍກ ແລະ ການຍຸບເລີກມູນນິທິ.....144
ພາກທີ III ຄອບຄົວ.....146
ໝວດທີ 1 ຫຼັກການທົ່ວໄປ.....146
ມາດຕາ 137 ຄອບຄົວ.....146
ມາດຕາ 138 ສາຍພົວພັນຄອບຄົວ.....146
ມາດຕາ 139 ສາຍຍາດ ແລະ ລຳດັບຂອງສາຍຍາດ.....147
ມາດຕາ 140 ຄວາມສະເໝີພາບລະຫວ່າງຍິງ ແລະ ຊາຍໃນສາຍພົວພັນຄອບຄົວ.....149
ມາດຕາ 141 ສິດເສລີພາບໃນການແຕ່ງດອງ.....149
ມາດຕາ 142 ການເປັນຜົວໜຶ່ງເມຍດຽວ.....150
ມາດຕາ 143 ການປົກປ້ອງສິດ ແລະ ຜົນປະໂຫຍດຂອງແມ່ ແລະ ເດັກ.....150
ມາດຕາ 144 ການພັດທະນາຄອບຄົວ.....151
ໝວດທີ 2 ການໝັ້ນໝາຍ ແລະ ການສູ່ຂໍ.....152
ມາດຕາ 145 ການໝັ້ນໝາຍ.....152
ມາດຕາ 146 ການບໍ່ປະຕິບັດຕາມການໝັ້ນໝາຍ.....152
ມາດຕາ 147 ການສູ່ຂໍ.....153
ມາດຕາ 148 ການໃຊ້ແທນຄວາມເສຍຫາຍເນື່ອງຈາກການບໍ່ປະຕິບັດຕາມການສູ່ຂໍ.....154
ມາດຕາ 149 ການຮ່ວມປະເວນີກັນກ່ອນການເປັນ ຜົວ ເມຍ.....154
ໝວດທີ 3 ການແຕ່ງດອງ.....156
ກ. ເງື່ອນໄຂ ແລະ ລະບຽບການແຕ່ງດອງ.....156
ມາດຕາ 150 ເງື່ອນໄຂຂອງການແຕ່ງດອງ.....156
ມາດຕາ 151 ການບໍ່ອະນຸຍາດໃຫ້ແຕ່ງດອງ.....156

ມາດຕາ 152 ການຈົດທະບຽນການແຕ່ງດອງ.....157
ມາດຕາ 153 ພິທີແຕ່ງດອງ.....158
ຂ. ການແຕ່ງດອງທີ່ພົວພັນກັບຕ່າງປະເທດ.....158
ມາດຕາ 154 ການແຕ່ງດອງ ລະຫວ່າງ ພົນລະເມືອງລາວ ກັບ ຄົນຕ່າງປະເທດ, ຄົນຕ່າງດ້າວ ແລະ ຄົນບໍ່ມີສັນຊາດ ຢູ່ ສປປ ລາວ.....159
ມາດຕາ 155 ການແຕ່ງດອງ ລະຫວ່າງ ຄົນຕ່າງປະເທດ, ຄົນຕ່າງດ້າວ ແລະ ຄົນບໍ່ມີສັນຊາດດ້ວຍກັນ ຢູ່ ສປປ ລາວ.....159
ມາດຕາ 156 ການແຕ່ງດອງ ລະຫວ່າງ ພົນລະເມືອງລາວ ດ້ວຍກັນ ຢູ່ຕ່າງປະເທດ.....160
ມາດຕາ 157 ການແຕ່ງດອງ ລະຫວ່າງ ພົນລະເມືອງລາວ ກັບ ຄົນຕ່າງປະເທດ, ຄົນຕ່າງດ້າວ, ຄົນບໍ່ມີສັນຊາດ ຢູ່ຕ່າງປະເທດ.....161
ຄ. ການແຕ່ງດອງເປັນໂມຄະ.....161
ມາດຕາ 158 ການແຕ່ງດອງເປັນໂມຄະ.....162
ມາດຕາ 159 ການລົບລ້າງການແຕ່ງດອງເປັນໂມຄະ.....162
ມາດຕາ 160 ຜົນສະທ້ອນຂອງການແຕ່ງດອງເປັນໂມຄະ.....163
ໝວດທີ 4 ສາຍພົວພັນລະຫວ່າງຜົວເມຍ.....164
ມາດຕາ 161 ສິດຂອງຜົວເມຍ.....164
ມາດຕາ 162 ສິດໃນການເຄື່ອນໄຫວຂອງຜົວເມຍ.....165
ມາດຕາ 163 ສິດໃນການເລືອກນາມສະກຸນ.....165
ມາດຕາ 164 ພັນທະຂອງຜົວເມຍ.....166
ມາດຕາ 165 ຄວາມຮັບຜິດຊອບຂອງ ຜົວ ເມຍ ຕໍ່ໜີ້ສິນ.....166
ໝວດທີ 5 ຊັບສົມບັດຂອງ ຜົວ ເມຍ.....168
ມາດຕາ 166 ຊັບສົມບັດຂອງ ຜົວ ເມຍ.....168
ມາດຕາ 167 ຊັບເດີມ.....168
ມາດຕາ 168 ສິນສົມສ້າງ.....169
ມາດຕາ 169 ການນຳໃຊ້ສິນສົມສ້າງ.....170
ໝວດທີ 6 ການສິ້ນສຸດການເປັນ ຜົວ ເມຍ.....171
ມາດຕາ 170 ການສິ້ນສຸດການເປັນ ຜົວ ເມຍ.....171
ກ. ການຢ່າຮ້າງ.....171
ມາດຕາ 171 ການຢ່າຮ້າງ.....172
ມາດຕາ 172 ປະເພດການຢ່າຮ້າງ.....172
ມາດຕາ 173 ການຢ່າຮ້າງດ້ວຍຄວາມສະໝັກໃຈ.....173
ມາດຕາ 174 ຂັ້ນຕອນການຢ່າຮ້າງດ້ວຍຄວາມສະໝັກໃຈ.....174
ມາດຕາ 175 ການຢ່າຮ້າງຕາມການຕັດສິນຂອງສານ.....174
ມາດຕາ 176 ສາເຫດຂອງການຢ່າຮ້າງ.....175
ມາດຕາ 177 ຂັ້ນຕອນການພິຈາລະນາການຢ່າຮ້າງຕາມຄຳຕັດສິນຂອງສານ.....177
ມາດຕາ 178 ການບໍ່ອະນຸຍາດໃຫ້ຂໍຢ່າຮ້າງ.....178

ມາດຕາ 179 ການເບິ່ງແຍງ ແລະ ການລ້ຽງດູລູກ.....179
ມາດຕາ 180 ການຮ້ອງຂໍຄ່າລ້ຽງດູ ເມຍ ຫຼື ຜົວ.....180
ມາດຕາ 181 ການແບ່ງປັນຊັບເດີມ ແລະ ສິນສົມສ້າງ.....181
ມາດຕາ 182 ຄ່າດອງຄ້າງ.....182
ຂ. ການຢ່າຮ້າງທີ່ພົວພັນກັບຕ່າງປະເທດ.....183
ມາດຕາ 183 ການຢ່າຮ້າງ ລະຫວ່າງ ພົນລະເມືອງລາວ ກັບ ຄົນຕ່າງປະເທດ, ຄົນຕ່າງດ້າວ ຫຼື ຄົນບໍ່ມີສັນຊາດ ຢູ່ ສປປ ລາວ.....183
ມາດຕາ 184 ການຢ່າຮ້າງ ລະຫວ່າງ ຄົນຕ່າງປະເທດ, ຄົນຕ່າງດ້າວ ຫຼື ຄົນບໍ່ມີສັນຊາດ ດ້ວຍກັນ ຢູ່ ສປປ ລາວ.....184
ມາດຕາ 185 ການຢ່າຮ້າງ ລະຫວ່າງ ພົນລະເມືອງລາວ ດ້ວຍກັນ ຢູ່ຕ່າງປະເທດ.....184
ມາດຕາ 186 ການຢ່າຮ້າງ ລະຫວ່າງ ພົນລະເມືອງລາວ ກັບ ຄົນຕ່າງປະເທດ, ຄົນຕ່າງດ້າວ ຫຼື ຄົນບໍ່ມີສັນຊາດ ຢູ່ຕ່າງປະເທດ.....185
ມາດຕາ 187 ການຈົດທະບຽນການຢ່າຮ້າງ ລະຫວ່າງ ພົນລະເມືອງລາວ ກັບ ຄົນຕ່າງດ້າວ, ຄົນຕ່າງປະເທດ ຫຼື ຄົນບໍ່ມີສັນຊາດ.....186
ຄ. ການເສຍຊີວິດ.....186
ມາດຕາ 188 ການເສຍຊີວິດຂອງ ຜົວ ຫຼື ເມຍ.....186
ມາດຕາ 189 ການເສຍຊີວິດຂອງ ຜົວ ຫຼື ເມຍ ໂດຍທຳມະຊາດ.....187
ມາດຕາ 190 ການເສຍຊີວິດຂອງ ຜົວ ຫຼື ເມຍ ຕາມຄຳຕັດສິນຂອງສານ.....187
ງ. ຜົນຂອງການສິ້ນສຸດສາຍພົວພັນ ຜົວ ເມຍ ແລະ ການເອົາກັນຄືນເປັນ ຜົວ ເມຍ..188
ມາດຕາ 191 ຜົນຂອງການສິ້ນສຸດສາຍພົວພັນ ຜົວ ເມຍ.....188
ມາດຕາ 192 ການສິ້ນສຸດການໃຊ້ນາມສະກຸນດຽວກັນ.....188
ມາດຕາ 193 ການເອົາກັນຄືນເປັນ ຜົວ ເມຍ.....189
ໝວດທີ 7 ສາຍພົວພັນ ພໍ່ ແມ່ ແລະ ລູກ.....190
ກ. ລູກຄົງ.....190
ມາດຕາ 194 ການໄດ້ສິດ ແລະ ພັນທະຂອງພໍ່ແມ່ ແລະ ລູກຄົງ.....190
ມາດຕາ 195 ການແຈ້ງເກີດ ແລະ ຈົດທະບຽນການເກີດ.....190
ມາດຕາ 196 ຊື່ ແລະ ນາມສະກຸນຂອງເດັກ.....191
ມາດຕາ 197 ການຮັບຮູ້ການເປັນພໍ່.....192
ມາດຕາ 198 ການປະຕິເສດການເປັນພໍ່.....193
ຂ. ລູກລ້ຽງ.....193
ມາດຕາ 199 ການເອົາເດັກມາເປັນລູກລ້ຽງ.....193
ມາດຕາ 200 ເງື່ອນໄຂຜູ້ຮ້ອງຂໍເອົາເດັກເປັນລູກລ້ຽງ.....194
ມາດຕາ 201 ເງື່ອນໄຂຂອງເດັກທີ່ຈະເປັນລູກລ້ຽງ.....195
ມາດຕາ 202 ວິທີການເອົາເດັກມາເປັນລູກລ້ຽງ.....196
ມາດຕາ 203 ການຈົດທະບຽນການເປັນລູກລ້ຽງ.....196
ມາດຕາ 204 ການຮັກສາຄວາມລັບ ກ່ຽວກັບການເອົາເດັກເປັນລູກລ້ຽງ.....197

ມາດຕາ 205 ຜົນຂອງການເປັນລູກລ້ຽງ.....198
ມາດຕາ 206 ການສິ້ນສຸດການເປັນລູກລ້ຽງ.....199
ຄ. ການເອົາເດັກໄປເປັນລູກລ້ຽງ ຂອງພົນລະເມືອງຕ່າງປະເທດ.....200
ມາດຕາ 207 ເງື່ອນໄຂຂອງພໍ່ລ້ຽງ ແມ່ລ້ຽງ ທີ່ເປັນຄົນຕ່າງດ້າວ, ຄົນຕ່າງປະເທດ.....200
ມາດຕາ 208 ເງື່ອນໄຂຂອງເດັກທີ່ຈະໄປເປັນລູກລ້ຽງ.....200
ມາດຕາ 209 ການເອົາເດັກເປັນລູກລ້ຽງ ຢູ່ຕ່າງປະເທດ.....201
ມາດຕາ 210 ການເອົາເດັກມາເປັນລູກລ້ຽງຢູ່ ສປປ ລາວ.....202
ມາດຕາ 211 ວິທີການເອົາເດັກໄປເປັນລູກລ້ຽງ ຂອງຄົນຕ່າງປະເທດ, ຄົນຕ່າງດ້າວ ຫຼື ຄົນບໍ່ມີສັນຊາດ.....203
ມາດຕາ 212 ຜົນຂອງການເອົາເດັກໄປເປັນລູກລ້ຽງ ຂອງຄົນຕ່າງປະເທດ, ຄົນຕ່າງດ້າວ ຫຼື ຄົນບໍ່ມີສັນຊາດ.....204
ງ. ລູກນ້ຳ.....204
ມາດຕາ 213 ລູກນ້ຳ.....204
ມາດຕາ 214 ການສິ້ນສຸດການເປັນລູກນ້ຳ.....205
ໝວດທີ 8 ສິດ ແລະ ພັນທະຂອງ ພໍ່ ແມ່ ແລະ ລູກ.....206
ມາດຕາ 215 ສິດ ແລະ ພັນທະຂອງ ພໍ່ ແມ່ ໃນການປົກປ້ອງສິດ ແລະ ຜົນປະໂຫຍດຂອງລູກ.....206
ມາດຕາ 216 ພັນທະຂອງ ພໍ່ ແມ່ ໃນການສຶກສາອົບຮົມລູກ.....207
ມາດຕາ 217 ພັນທະຂອງ ພໍ່ ແມ່ ໃນການເບິ່ງແຍງລ້ຽງດູລູກ.....207
ມາດຕາ 218 ພັນທະຂອງລູກໃນການລ້ຽງດູ, ເບິ່ງແຍງ ແລະ ຊ່ວຍເຫຼືອ ພໍ່ ແມ່.....208
ມາດຕາ 219 ຊັບຂອງ ພໍ່ ແມ່ ແລະ ລູກ.....209
ມາດຕາ 220 ການປົດສິດໃນການເປັນ ພໍ່ ແມ່ ແລະ ລູກ.....210
ມາດຕາ 221 ການຄືນສິດໃນການເປັນ ພໍ່ ແມ່ ແລະ ລູກ.....212
ໝວດທີ 9 ການແຕ່ງຕັ້ງຜູ້ປົກຄອງເດັກ.....213
ມາດຕາ 222 ວິທີການແຕ່ງຕັ້ງຜູ້ປົກຄອງເດັກ.....213
ມາດຕາ 223 ສິດ ແລະ ພັນທະຂອງຜູ້ປົກຄອງເດັກ.....213
ມາດຕາ 224 ການຂໍຖອນ ຫຼື ປ່ຽນຜູ້ປົກຄອງເດັກ.....214
ມາດຕາ 225 ການສິ້ນສຸດການປົກຄອງເດັກ.....215
ມາດຕາ 226 ເງື່ອນໄຂ, ການສິ້ນສຸດ ແລະ ຜົນຂອງການສິ້ນສຸດ ການປົກຄອງເດັກ.....215
ພາກທີ IV ຊັບ, ກຳມະສິດ ແລະ ສິດອື່ນຕໍ່ຊັບ.....218
ໝວດທີ 1 ຊັບ.....218
ມາດຕາ 227 ຊັບ.....218
ມາດຕາ 228 ອະສັງຫາລິມະຊັບ.....219
ມາດຕາ 229 ສັງຫາລິມະຊັບ.....220
ມາດຕາ 230 ໝາກຜົນ.....220
ມາດຕາ 231 ຊັບສິ່ງຂອງຕົ້ນຕໍ ແລະ ຊັບສິ່ງຂອງປະກອບ.....221

ມາດຕາ 232 ຊັບສິ່ງຂອງສາມາດແຍກໄດ້ ແລະ ຊັບສິ່ງຂອງບໍ່ສາມາດແຍກໄດ້.....222
ມາດຕາ 233 ຊັບສິ່ງຂອງປ່ຽນແທນໄດ້ ແລະ ຊັບສິ່ງຂອງບໍ່ປ່ຽນແທນໄດ້.....223
ມາດຕາ 234 ຊັບສິ່ງຂອງທີ່ປະກອບເປັນໜຶ່ງດຽວ.....224
ໝວດທີ 2 ການຄອບຄອງ.....225
ມາດຕາ 235 ການຄອບຄອງ.....225
ມາດຕາ 236 ການຄອບຄອງຊັບສິ່ງຂອງໂດຍທາງກົງ ແລະ ທາງອ້ອມ.....226
ມາດຕາ 237 ການຄອບຄອງດ້ວຍຄວາມບໍລິສຸດໃຈ ແລະ ບໍ່ບໍລິສຸດໃຈ.....226
ມາດຕາ 238 ການຄອບຄອງໂດຍຖືກຕ້ອງ ແລະ ບໍ່ຖືກຕ້ອງ.....227
ມາດຕາ 239 ການສັນນິຖານກ່ຽວກັບການຄອບຄອງ ຫຼື ຜູ້ຄອບຄອງ.....228
ມາດຕາ 240 ການຄອບຄອງຊັບສິ່ງຂອງຕາມການອະນຸຍາດພິເສດ.....229
ມາດຕາ 241 ໝາກຜົນທີ່ເກີດຈາກຊັບສິ່ງຂອງ ທີ່ຄອບຄອງໂດຍບໍ່ຖືກຕ້ອງ.....230
ມາດຕາ 242 ການເຮັດໃຫ້ຊັບສິ່ງຂອງທີ່ຄອບຄອງໂດຍບໍ່ຖືກຕ້ອງຢູ່ໃນສະພາບເດີມ ແລະ/ຫຼື ດີ ຂຶ້ນ.....231
ມາດຕາ 243 ການສົ່ງຄືນຊັບສິ່ງຂອງທີ່ຄອບຄອງໂດຍບໍ່ຖືກຕ້ອງ.....232
ມາດຕາ 244 ຄວາມຮັບຜິດຊອບຂອງຜູ້ຄອບຄອງຊັບສິ່ງຂອງໂດຍບໍ່ຖືກຕ້ອງ.....234
ມາດຕາ 245 ການປ່ຽນການຄອບຄອງ.....235
ມາດຕາ 246 ການປົກປ້ອງການຄອບຄອງ.....237
ມາດຕາ 247 ການສິ້ນສຸດການຄອບຄອງ.....238
ມາດຕາ 248 ການຄອບຄອງຊັບທີ່ບໍ່ມີຕົວຕົນ.....240
ໝວດທີ 3 ກຳມະສິດ.....240
ມາດຕາ 249 ກຳມະສິດ.....240
ມາດຕາ 250 ສິດໃນກຳມະສິດ.....241
ກ. ສິດຄອບຄອງ.....241
ມາດຕາ 251 ສິດຄອບຄອງຂອງເຈົ້າກຳມະສິດ.....242
ມາດຕາ 252 ການໄດ້ສິດຄອບຄອງ.....242
ມາດຕາ 253 ສິດຄອບຄອງຂອງຜູ້ບໍ່ແມ່ນເຈົ້າກຳມະສິດ.....243
ຂ. ສິດນຳໃຊ້.....243
ມາດຕາ 254 ສິດນຳໃຊ້.....244
ມາດຕາ 255 ສິດນຳໃຊ້ຂອງເຈົ້າກຳມະສິດ.....244
ມາດຕາ 256 ສິດນຳໃຊ້ຂອງຜູ້ບໍ່ແມ່ນເຈົ້າກຳມະສິດ.....244
ຄ. ສິດໄດ້ຮັບໝາກຜົນ.....245
ມາດຕາ 257 ສິດໄດ້ຮັບໝາກຜົນ.....245
ງ. ສິດຊື້ຂາດ.....245
ມາດຕາ 258 ສິດຊື້ຂາດ.....246
ມາດຕາ 259 ການຈຳກັດສິດໃນການຊື້ຂາດ.....246
ມາດຕາ 260 ສິດຊື້ຂາດຂອງຜູ້ບໍ່ແມ່ນເຈົ້າກຳມະສິດ.....246

ໝວດທີ 4 ຮູບກຳມະສິດ.....247
ມາດຕາ 261 ຮູບກຳມະສິດ.....247
ກ. ກຳມະສິດຂອງລັດ.....248
ມາດຕາ 262 ເຈົ້າກຳມະສິດຂອງຊັບສິ່ງຂອງຂອງລັດ.....248
ມາດຕາ 263 ເປົ້າໝາຍກຳມະສິດຂອງລັດ.....249
ມາດຕາ 264 ການໄດ້ມາເປັນກຳມະສິດຂອງລັດ.....250
ມາດຕາ 265 ການຊື້ຂາດກ່ຽວກັບອະສັງຫາລິມະຊັບຂອງລັດ.....253
ມາດຕາ 266 ການຊື້ຂາດກ່ຽວກັບຊັບໝຸນວຽນ ແລະ ຜະລິດຕະພັນ.....253
ມາດຕາ 267 ການບໍ່ອະນຸຍາດໃຫ້ ຮິບ ຫຼື ຍຶດຊັບສິ່ງຂອງ ຂອງລັດ.....,.....254
ຂ. ກຳມະສິດລວມໝູ່.....254
ມາດຕາ 268 ກຳມະສິດລວມໝູ່.,.....255
ມາດຕາ 269 ເນື້ອໃນຂອງກຳມະສິດຂອງສະຫະກອນ ຫຼື ອົງການຈັດຕັ້ງລວມໝູ່ອື່ນ.....255
ມາດຕາ 270 ການໄດ້ມາເປັນກຳມະສິດຂອງສະຫະກອນ ຫຼື ອົງການຈັດຕັ້ງລວມໝູ່ອື່ນ...256
ມາດຕາ 271 ການນຳໃຊ້ທີ່ດິນທີ່ຂຶ້ນກັບສິດຂອງສະຫະກອນ ຫຼື ອົງການຈັດຕັ້ງລວມໝູ່ອື່ນ....
.....257
ຄ. ກຳມະສິດເອກະເທດ.....257
ມາດຕາ 272 ເປົ້າໝາຍກຳມະສິດເອກະເທດ.....257
ມາດຕາ 273 ສິດ ແລະ ພັນທະຂອງເຈົ້າກຳມະສິດເອກະເທດ.....258
ງ. ກຳມະສິດເອກະຊົນ.....258
ມາດຕາ 274 ກຳມະສິດເອກະຊົນ.....258
ມາດຕາ 275 ສິດ ແລະ ພັນທະຂອງຫົວໜ່ວຍເສດຖະກິດເອກະຊົນ.....259
ມາດຕາ 276 ມາດຕະການຕໍ່ຫົວໜ່ວຍເສດຖະກິດເອກະຊົນ.....259
ມາດຕາ 277 ກຳມະສິດສ່ວນຕົວ.....260
ມາດຕາ 278 ເນື້ອໃນຂອງກຳມະສິດສ່ວນຕົວ.....260
ມາດຕາ 279 ກຳມະສິດສ່ວນຕົວຂອງສະມາຊິກຄອບຄົວສະຫະກອນ ຫຼື ອົງການຈັດຕັ້ງລວມ
ໝູ່ອື່ນ.....261
ໝວດທີ 5 ກຳມະສິດຮ່ວມ.....262
ມາດຕາ 280 ກຳມະສິດຮ່ວມ.....262
ມາດຕາ 281 ກຳມະສິດຮ່ວມເປັນ ສ່ວນ, ພູດ ຫຼື ເປັນຮຸ້ນ.....263
ມາດຕາ 282 ກຳມະສິດຮ່ວມບໍ່ເປັນ ສ່ວນ, ພູດ ຫຼື ບໍ່ເປັນຮຸ້ນ.....263
ມາດຕາ 283 ກຳມະສິດຮ່ວມຂອງຊຸມຊົນ.....264
ມາດຕາ 284 ສິດຄອບຄອງຂອງເຈົ້າກຳມະສິດຮ່ວມ.....265
ມາດຕາ 285 ສິດນຳໃຊ້ຂອງເຈົ້າກຳມະສິດຮ່ວມ.....266
ມາດຕາ 286 ສິດໄດ້ຮັບໝາກຜົນຂອງເຈົ້າກຳມະສິດຮ່ວມ.....266
ມາດຕາ 287 ສິດຊື້ຂາດກຳມະສິດຮ່ວມ.....267
ມາດຕາ 288 ການຄຸ້ມຄອງ, ບຳລຸງ ແລະ ການຮັກສາຊັບຮ່ວມ.....268

ມາດຕາ 289 ຜົນສະທ້ອນຕໍ່ຜູ້ໄດ້ຮັບຜົນປະໂຫຍດຕໍ່.....269
ມາດຕາ 290 ການແບ່ງປັນກຳມະສິດຮ່ວມ.....269
ມາດຕາ 291 ການສິ້ນສຸດກຳມະສິດຮ່ວມ.....270
ໝວດທີ 6 ການໄດ້ກຳມະສິດ.....271
ມາດຕາ 292 ການໄດ້ກຳມະສິດ..... 271
ມາດຕາ 293 ພື້ນຖານຂອງການໄດ້ມາເປັນກຳມະສິດ.....272
ມາດຕາ 294 ການມອບຊັບສິ່ງຂອງ.....273
ມາດຕາ 295 ການມອບຊັບສິ່ງຂອງໃຫ້ເປັນກຳມະສິດຂອງຜູ້ຄອບຄອງ.....273
ມາດຕາ 296 ການມອບຊັບສິ່ງຂອງທີ່ຍັງຢູ່ໃນການຄອບຄອງຂອງເຈົ້າກຳມະສິດ.....274
ມາດຕາ 297 ການມອບຊັບສິ່ງຂອງທີ່ຢູ່ໃນການຄອບຄອງຂອງບຸກຄົນທີສາມ.....275
ມາດຕາ 298 ການໄດ້ກຳມະສິດກ່ຽວກັບໝາກຜົນ.....275
ມາດຕາ 299 ການໄດ້ກຳມະສິດດ້ວຍການສືບທອດມູນມໍຣະດົກ.....276
ມາດຕາ 300 ການໄດ້ຊັບສິ່ງຂອງທີ່ບໍ່ມີເຈົ້າຂອງ.....277
ມາດຕາ 301 ການໄດ້ກຳມະສິດຍ້ອນການເກັບຊັບສິ່ງຂອງຕົກເຮ່ຍ.....278
ມາດຕາ 302 ຄ່າບຳເນັດຫຼືລາງວັນ ແລະ ການທົດແທນຄ່າໃຊ້ຈ່າຍກ່ຽວກັບຊັບສິ່ງຂອງຕົກເຮ່ຍ
.....279
ມາດຕາ 303 ການໄດ້ສັດຂາດການຮັກສາ.....280
ມາດຕາ 304 ການໄດ້ກຳມະສິດຍ້ອນການພົບເຫັນວັດຖຸທີ່ມີຄ່າ.....282
ມາດຕາ 305 ຄ່າບຳເນັດຫຼືລາງວັນແລະການທົດແທນຄ່າໃຊ້ຈ່າຍກ່ຽວກັບການພົບເຫັນວັດຖຸມີຄ່າ
.....283
ມາດຕາ 306 ການໄດ້ກຳມະສິດຍ້ອນການໂຮມຊັບສິ່ງຂອງ.....284
ມາດຕາ 307 ການເຊື່ອມຕໍ່ສັງຫາລິມະຊັບກັບ ອະສັງຫາລິມະຊັບ.....285
ມາດຕາ 308 ການເຊື່ອມຕໍ່ອະສັງຫາລິມະຊັບເຂົ້າກັນ.....286
ມາດຕາ 309 ການເຊື່ອມຕໍ່ສັງຫາລິມະຊັບເຂົ້າກັນ.....286
ມາດຕາ 310 ການປະສົມສັງຫາລິມະຊັບເຂົ້າກັນ.....287
ມາດຕາ 311 ການປຸງແຕ່ງ.....288
ມາດຕາ 312 ການສິ້ນສຸດສິດຂອງບຸກຄົນທີສາມ.....289
ມາດຕາ 313 ການທົດແທນມູນຄ່າຂອງຊັບສິ່ງຂອງ.....290
ມາດຕາ 314 ການໄດ້ກຳມະສິດຕາມອາຍຸຄວາມ.....290
ໝວດທີ 7 ການສິ້ນສຸດກຳມະສິດ.....291
ມາດຕາ 315 ການສິ້ນສຸດກຳມະສິດ.....291
ມາດຕາ 316 ການຊີ້ຂາດກ່ຽວກັບຊັບສິ່ງຂອງ.....292
ມາດຕາ 317 ການໄດ້ກຳມະສິດໂດຍບຸກຄົນໃດໜຶ່ງ ຍ້ອນອາຍຸຄວາມ.....293
ມາດຕາ 318 ຊັບສິ່ງຂອງຖືກຍຶດເພື່ອຂາຍເລຫຼັງ ຫຼື ຖືກຮິບເປັນຂອງລັດ.....293
ມາດຕາ 319 ຊັບສິ່ງຂອງຖືກທຳລາຍ ຫຼື ສູນຫາຍ..... 294
ໝວດທີ 8 ຂອບເຂດການນຳໃຊ້ກຳມະສິດ.....294

ມາດຕາ 320 ຂອບເຂດການນຳໃຊ້ກຳມະສິດ.....294
ມາດຕາ 321 ພັນທະຂອງເຈົ້າກຳມະສິດໃນສະພາວະທີ່ຈຳເປັນ.....295
ມາດຕາ 322 ການປົກປັກຮັກສາສິ່ງແວດລ້ອມ.....296
ມາດຕາ 323 ການກຳນົດເຂດແດນ.....297
ມາດຕາ 324 ການລ້ອມຮົ້ວ.....297
ມາດຕາ 325 ກຳມະສິດຮ່ວມຂອງສິ່ງທີ່ຕັ້ງຢູ່ເຂດແດນ.....298
ມາດຕາ 326 ຂອບເຂດການປຸກສ້າງເຮືອນຫຼືການປູກຕົ້ນໄມ້.....299
ມາດຕາ 327 ສິດຂອງຜູ້ຖືກເສຍຫາຍຍ້ອນການນຳໃຊ້ກຳມະສິດໂດຍບໍ່ຖືກຕ້ອງ.....299
ມາດຕາ 328 ການອະນຸຍາດໃຫ້ມີທາງຜ່ານ, ການເນັ່ງສາຍໄຟຟ້າຜ່ານ.....300
ມາດຕາ 329 ການອະນຸຍາດໃຫ້ນ້ຳຮ່ອງໄຫຼຜ່ານ..... 301
ມາດຕາ 330 ໄລຍະຫ່າງໃນການປຸກສ້າງເຮືອນ, ການກໍ່ສ້າງອາຄານ.....301
ມາດຕາ 331 ການຂໍອະນຸຍາດນຳໃຊ້ຕອນດິນທີ່ຕິດຈອດກັນ.....302
ມາດຕາ 332 ການຂຸດນ້ຳສ້າງ, ສະນ້ຳ, ເຈາະນ້ຳບາດານ.....303
ໝວດທີ 9 ການປົກປ້ອງກຳມະສິດ.....303
ມາດຕາ 333 ການປົກປ້ອງກຳມະສິດ.....303
ມາດຕາ 334 ການທວງເອົາຊັບສິ່ງຂອງຄືນ.....304
ມາດຕາ 335 ການທວງໃຫ້ຮັບຮູ້ກຳມະສິດ.....305
ມາດຕາ 336 ການທວງໃຫ້ຢຸດເຊົາການກີດຂວາງ ຫຼື ອຸປະສັກ.....305
ມາດຕາ 337 ການປົກປ້ອງກຳມະສິດຈາກສິ່ງກີດຂວາງ ທີ່ຈະເກີດຂຶ້ນ.....306
ມາດຕາ 338 ການທວງເອົາການໃຊ້ແທນຄ່າເສຍຫາຍທີ່ເນື່ອງມາຈາກການນຳໃຊ້ ນ້ຳຫ້ວຍ, ນ້ຳ ໜອງຄອງບຶງ ຫຼື ເໝືອງຝາຍ.....307
ໝວດທີ 10 ທາດສະພາບ.....307
ມາດຕາ 339 ທາດສະພາບ.....307
ມາດຕາ 340 ທາດສະພາບຕາມສັນຍາ ຫຼື ນິຕິກຳອື່ນ.....309
ມາດຕາ 341 ການໄດ້ທາດສະພາບຕາມສັນຍາ ຫຼື ນິຕິກຳອື່ນ.....309
ມາດຕາ 342 ທາດສະພາບຕາມສັນຍາ ຫຼື ນິຕິກຳອື່ນ ແລະ ສິດນຳໃຊ້ທີ່ດິນຄອງທາດ.....310
ມາດຕາ 343 ການນຳໃຊ້ທາດສະພາບຕາມສັນຍາ ຫຼື ນິຕິກຳອື່ນ.....311
ມາດຕາ 344 ພັນທະຂອງເຈົ້າຂອງທີ່ດິນທາດ.....312
ມາດຕາ 345 ພັນທະຂອງຜູ້ຄອບຄອງທີ່ດິນຄອງທາດ.....312
ມາດຕາ 346 ການປົກປ້ອງທາດສະພາບຕາມສັນຍາ ຫຼື ນິຕິກຳອື່ນ.....313
ມາດຕາ 347 ການສິ້ນສຸດທາດສະພາບຕາມ ສັນຍາ ຫຼື ນິຕິກຳອື່ນ.....313
ມາດຕາ 348 ການລຶບທະບຽນທາດສະພາບຕາມສັນຍາ ຫຼື ນິຕິກຳອື່ນ.....314
ມາດຕາ 349 ຜົນຂອງການສິ້ນສຸດທາດສະພາບຕາມສັນຍາ ຫຼື ນິຕິກຳອື່ນ.....315
ໝວດທີ 11 ສິດເໜືອທີ່ດິນ.....316
ມາດຕາ 350 ສິດເໜືອທີ່ດິນ.....316
ມາດຕາ 351 ເປົ້າໝາຍຂອງສິດເໜືອທີ່ດິນ.....317

ມາດຕາ 352 ການໄດ້ສິດເໜືອທີ່ດິນ.....318
ມາດຕາ 353 ການນຳໃຊ້ສິດເໜືອທີ່ດິນ.....319
ມາດຕາ 354 ພັນທະຂອງຜູ້ໃຫ້ສິດເໜືອທີ່ດິນ.....319
ມາດຕາ 355 ພັນທະຂອງຜູ້ນຳໃຊ້ສິດເໜືອທີ່ດິນ.....320
ມາດຕາ 356 ການປົກປ້ອງສິດເໜືອທີ່ດິນ.....320
ມາດຕາ 357 ການໂອນສິດເໜືອທີ່ດິນ.....320
ມາດຕາ 358 ການສືບທອດສິດເໜືອທີ່ດິນ.....321
ມາດຕາ 359 ການສິ້ນສຸດສິດເໜືອທີ່ດິນ.....321
ມາດຕາ 360 ການລົບທະບຽນສິດເໜືອທີ່ດິນ.....322
ມາດຕາ 361 ຜົນຂອງການສິ້ນສຸດສິດເໜືອທີ່ດິນ.....323
ພາກທີ V ຂໍ້ຜູກພັນໃນສັນຍາ.....326
ໝວດທີ 1 ຫຼັກການທົ່ວໄປ.....326
ມາດຕາ 362 ຂໍ້ຜູກພັນໃນສັນຍາ.....326
ມາດຕາ 363 ຫຼັກການກ່ຽວກັບຂໍ້ຜູກພັນໃນສັນຍາ.....326
ໝວດທີ 2 ການເຮັດສັນຍາ.....327
ມາດຕາ 364 ສັນຍາ.....327
ມາດຕາ 365 ລັກສະນະຂອງສັນຍາ.....328
ມາດຕາ 366 ເງື່ອນໄຂຂອງສັນຍາ.....329
ມາດຕາ 367 ຄວາມສະໝັກໃຈຂອງຄູ່ສັນຍາ.....331
ມາດຕາ 368 ເຫດຜົນຂອງສັນຍາ.....332
ມາດຕາ 369 ຮູບການຂອງສັນຍາ.....332
ມາດຕາ 370 ເນື້ອໃນຂອງສັນຍາ.....334
ມາດຕາ 371 ການສະເໜີ ແລະ ການຕອບຮັບສັນຍາ.....335
ມາດຕາ 372 ການສະເໜີໃຫ້ລາງວັນ.....336
ມາດຕາ 373 ການສະເໜີຊິງລາງວັນ.....337
ມາດຕາ 374 ການຕີຄວາມໝາຍຂອງສັນຍາ.....338
ມາດຕາ 375 ຜົນຂອງສັນຍາ.....338
ໝວດທີ 3 ສັນຍາເປັນໂມຄະ.....339
ມາດຕາ 376 ສັນຍາເປັນໂມຄະ.....339
ມາດຕາ 377 ຜົນສະທ້ອນຂອງສັນຍາເປັນໂມຄະ.....340
ໝວດທີ 4 ການປະຕິບັດສັນຍາ.....341
ມາດຕາ 378 ການປະຕິບັດສັນຍາ.....341
ມາດຕາ 379 ການປະຕິບັດສັນຍາເພີ່ມເຕີມ.....342
ມາດຕາ 380 ກຳນົດເວລາຂອງການປະຕິບັດສັນຍາ.....343
ມາດຕາ 381 ສະຖານທີ່ປະຕິບັດສັນຍາ.....343
ມາດຕາ 382 ການຊຳລະ.....345

ມາດຕາ 383 ລຳດັບການຊຳລະໜີ้.....346
ມາດຕາ 384 ການປົດໜີ้ ຫຼື ພັນທະ.....346
ມາດຕາ 385 ການຫັກລົບໜີ้ ຫຼື ພັນທະ.....347
ມາດຕາ 386 ການແຈ້ງຂໍ้ຫຍຸ້ງຍາກໃນການປະຕິບັດສັນຍາ.....348
ມາດຕາ 387 ການໂຈະການປະຕິບັດສັນຍາ.....349
ໝວດທີ 5 ມາດຕະການຮັບປະກັນການປະຕິບັດສັນຍາ.....351
ມາດຕາ 388 ມາດຕະການຮັບປະກັນການປະຕິບັດສັນຍາ.....351
ມາດຕາ 389 ການມັດຈຳ.....351
ມາດຕາ 390 ການປັບໃໝ.....353
ໝວດທີ 6 ການບໍ່ປະຕິບັດສັນຍາ.....354
ມາດຕາ 391 ການບໍ່ປະຕິບັດສັນຍາ.....354
ມາດຕາ 392 ຜົນສະທ້ອນຂອງການບໍ່ປະຕິບັດສັນຍາ.....355
ມາດຕາ 393 ການທວງໃຫ້ປະຕິບັດສັນຍາ.....356
ມາດຕາ 394 ການໃຊ້ແທນຄວາມເສຍຫາຍ.....357
ມາດຕາ 395 ການຍົກເລີກເນື່ອງຈາກການບໍ່ປະຕິບັດສັນຍາ.....358
ມາດຕາ 396 ສິດດຳເນີນການແທນລູກໜີ้.....359
ມາດຕາ 397 ສິດຂອງເຈົ້າໜີ้ຕໍ່ບຸກຄົນທີສາມ.....360
ໝວດທີ 7 ການປ່ຽນແປງ, ການຍົກເລີກ ແລະ ການສິ້ນສຸດສັນຍາ.....361
ມາດຕາ 398 ການປ່ຽນແປງສັນຍາ.....361
ມາດຕາ 399 ການຍົກເລີກສັນຍາຕາມການຕົກລົງ.....361
ມາດຕາ 400 ການສິ້ນສຸດສັນຍາ.....362
ໝວດທີ 8 ການປ່ຽນເຈົ້າໜີ้ ແລະ ລູກໜີ้.....363
ມາດຕາ 401 ການປ່ຽນເຈົ້າໜີ้.....363
ມາດຕາ 402 ການປ່ຽນລູກໜີ้.....364
ມາດຕາ 403 ການໂອນສິດ ແລະ ພັນທະ.....365
ໝວດທີ 9 ຜົນຂອງສັນຍາຕໍ່ບຸກຄົນທີສາມ.....365
ມາດຕາ 404 ຜົນຂອງສັນຍາຕໍ່ບຸກຄົນທີສາມ.....365
ມາດຕາ 405 ສັນຍາເພື່ອບຸກຄົນທີສາມ.....366
ໝວດທີ 10 ປະເພດສັນຍາ.....366
ກ.ສັນຍາຊື້ຂາຍ.....366
ມາດຕາ 406 ສັນຍາຊື້ຂາຍ.....366
ມາດຕາ 407 ຄຸນນະພາບຂອງຊັບທີ່ຂາຍ 368
ມາດຕາ 408 ການຂາຍສິນຄ້າເປັນງິນຜ່ອນ.....370
ມາດຕາ 409 ການຊື້ຂາຍສັງຫາລິມະຊັບທີ່ໄດ້ມາໂດຍບໍ່ຖືກຕ້ອງ 371
ມາດຕາ 410 ການນຳສົ່ງສິນຄ້າ ຫຼື ຊັບສິ່ງຂອງທີ່ຂາຍ.....372
ຂ. ສັນຍາ ແລກປ່ຽນ.....374

ມາດຕາ 411 ສັນຍາແລກປ່ຽນ.....374
ມາດຕາ 412 ການເພີ່ມເງິນເຂົ້າໃນການແລກປ່ຽນ.....374
ມາດຕາ 413 ລະບຽບການກ່ຽວກັບສັນຍາແລກປ່ຽນ.....375
ຄ. ສັນຍາເຊົ່າຊື້.....376
ມາດຕາ 414 ສັນຍາເຊົ່າຊື້.....376
ມາດຕາ 415 ສິດ ແລະ ພັນທະຂອງຜູ້ໃຫ້ເຊົ່າຊື້.....376
ມາດຕາ 416 ສິດ ແລະ ພັນທະຂອງຜູ້ເຊົ່າຊື້.....377
ມາດຕາ 417 ການຊື້ຂາດຊັບສິ່ງຂອງ.....378
ງ. ສັນຍາມອບຊັບ.....379
ມາດຕາ 418 ສັນຍາມອບຊັບ.....379
ມາດຕາ 419 ຂອບເຂດການມອບຊັບ.....380
ມາດຕາ 420 ການມອບສັງຫາລິມະຊັບ.....380
ມາດຕາ 421 ການມອບອະສັງຫາລິມະຊັບ.....381
ມາດຕາ 422 ການມອບສິດທອງ.....382
ມາດຕາ 423 ພັນທະໃນການແຈ້ງຈຸດບົກພ່ອງຂອງຊັບ.....382
ຈ. ສັນຍາຍົກຊັບ.....383
ມາດຕາ 424 ສັນຍາຍົກຊັບ.....383
ມາດຕາ 425 ຂອບເຂດການຍົກຊັບ.....384
ມາດຕາ 426 ພັນທະໃນການແຈ້ງຈຸດບົກພ່ອງຂອງຊັບ.....384
ສ. ສັນຍາຂາຍຝາກ.....385
ມາດຕາ 427 ສັນຍາຂາຍຝາກ.....385
ມາດຕາ 428 ຜົນຂອງສັນຍາຂາຍຝາກ.....386
ມາດຕາ 429 ການປົກປັກຮັກສາຊັບທີ່ຂາຍຝາກ.....387
ຊ. ສັນຍາກູ້ຢືມ.....388
ມາດຕາ 430 ສັນຍາກູ້ຢືມ.....388
ມາດຕາ 431 ດອກເບ້ຍຂອງການກູ້ຢືມເງິນ.....389
ຍ. ສັນຍາຢືມຊັບໄປໃຊ້.....391
ມາດຕາ 432 ສັນຍາຢືມຊັບໄປໃຊ້.....391
ມາດຕາ 433 ຄວາມຮັບຜິດຊອບຂອງຜູ້ຢືມ.....392
ດ. ສັນຍາເຊົ່າຊັບ.....393
ມາດຕາ 434 ສັນຍາເຊົ່າຊັບ.....393
ມາດຕາ 435 ການຈ່າຍຄ່າເຊົ່າຊັບ.....394
ມາດຕາ 436 ການນຳໃຊ້ ແລະ ການສ້ອມແປງຊັບທີ່ເຊົ່າ.....395
ມາດຕາ 437 ການປ່ຽນເຈົ້າກຳມະສິດໃນຊັບທີ່ເຊົ່າ.....396
ມາດຕາ 438 ການໃຫ້ເຊົ່າຕໍ່.....397
ຕ. ສັນຍາສຳປະທານ.....398

ມາດຕາ 439 ສັນຍາສຳປະທານ.....398
ມາດຕາ 440 ສິດ ແລະ ພັນທະຂອງຄູ່ສັນຍາ.....399
ຖ. ສັນຍາຝາກຊັບສິ່ງຂອງ.....399
ມາດຕາ 441 ສັນຍາຝາກຊັບສິ່ງຂອງ.....399
ມາດຕາ 442 ສິດ ແລະ ພັນທະຂອງຜູ້ຮັບຝາກ.....401
ມາດຕາ 443 ສິດ ແລະ ພັນທະຂອງຜູ້ຝາກ.....402
ມາດຕາ 444 ການຝາກຊັບສິ່ງຂອງທີ່ອາດປ່ຽນຮູບ ຫຼື ເສຍຄຸນນະພາບໄວ.....403
ມາດຕາ 445 ວາມຮັບຜິດຊອບຂອງເຈົ້າຂອງໂຮງແຮມ ຫຼື ເຮືອນພັກ.....404
ທ. ສັນຍາມອບໝາຍ.....405
ມາດຕາ 446 ສັນຍາມອບໝາຍ.....405
ມາດຕາ 447 ສິດ ແລະ ພັນທະຂອງຜູ້ມອບໝາຍ.....406
ມາດຕາ 448 ສິດ ແລະ ພັນທະຂອງຜູ້ຮັບມອບໝາຍ.....407
ນ. ສັນຍາບໍລິການ.....408
ມາດຕາ 449 ສັນຍາບໍລິການ.....408
ມາດຕາ 450 ປະເພດຂອງສັນຍາບໍລິການ.....409
ມາດຕາ 451 ສິດ ແລະ ພັນທະຂອງຜູ້ບໍລິການ.....409
ມາດຕາ 452 ສິດ ແລະ ພັນທະຂອງຜູ້ໃຊ້ບໍລິການ.....410
ບ. ສັນຍາຮັບເໝົາກໍ່ສ້າງ.....411
ມາດຕາ 453 ສັນຍາຮັບເໝົາກໍ່ສ້າງ.....411
ມາດຕາ 454 ສິດ ແລະ ພັນທະຂອງເຈົ້າຂອງໂຄງການ.....411
ມາດຕາ 455 ສິດ ແລະ ພັນທະຂອງຜູ້ຮັບເໝົາ.....413
ມາດຕາ 456 ການຮັບປະກັນຄຸນນະພາບຂອງ ສິ່ງກໍ່ສ້າງ.....414
ປ. ສັນຍາແຮງງານ.....414
ມາດຕາ 457 ສັນຍາແຮງງານ.....414
ມາດຕາ 458 ສິດ ແລະ ພັນທະ ຂອງຜູ້ໃຊ້ແຮງງານ.....415
ມາດຕາ 459 ສິດ ແລະ ພັນທະ ຂອງຜູ້ອອກແຮງງານ.....416
ຜ. ສັນຍາຂົນສົ່ງ.....416
ມາດຕາ 460 ສັນຍາຂົນສົ່ງ.....416
ມາດຕາ 461 ປະເພດການຂົນສົ່ງ.....417
ມາດຕາ 462 ສິດ ແລະ ພັນທະຂອງຜູ້ຂົນສົ່ງ.....417
ມາດຕາ 463 ສິດ ແລະ ພັນທະຂອງຜູ້ໂດຍສານ ຫຼື ເຈົ້າຂອງສິ່ງຂອງ ຫຼື ສິນຄ້າ.....419
ມາດຕາ 464 ຄ່າໂດຍສານ ຫຼື ຄ່າຂົນສົ່ງ.....420
ຝ. ສັນຍາປະກັນໄພ.....421
ມາດຕາ 465 ສັນຍາປະກັນໄພ.....421
ມາດຕາ 466 ປະເພດສັນຍາປະກັນໄພ.....421
ພ. ສັນຍາຮຸ້ນສ່ວນ.....422

ມາດຕາ 467 ສັນຍາຮຸ້ນສ່ວນ.....422
ມາດຕາ 468 ການສິ້ນສຸດຂອງສັນຍາຮຸ້ນສ່ວນ.....423
ມາດຕາ 469 ການແບ່ງປັນຜົນປະໂຫຍດ ຫຼື ຄວາມຮັບຜິດຊອບຕໍ່ໜີ້ສິນ.....424
ພາກທີ VI ຂໍ້ຜູກພັນນອກສັນຍາ.....426
ໝວດທີ 1 ຫຼັກການທົ່ວໄປ.....426
ມາດຕາ 470 ຂໍ້ຜູກພັນນອກສັນຍາ.....426
ມາດຕາ 471 ປະເພດຂໍ້ຜູກພັນນອກສັນຍາ.....426
ໝວດທີ 2 ການລະເມີດ.....427
ມາດຕາ 472 ການລະເມີດ.....427
ມາດຕາ 473 ລັກສະນະຂອງຄວາມເສຍຫາຍ.....428
ມາດຕາ 474 ສາຍພົວພັນລະຫວ່າງເຫດ ແລະ ຜົນເສຍຫາຍ.....429
ມາດຕາ 475 ປະເພດຄວາມເສຍຫາຍ.....430
ມາດຕາ 476 ຄວາມເສຍຫາຍທາງດ້ານຊັບ.....431
ມາດຕາ 477 ຄວາມເສຍຫາຍທາງດ້ານສຸຂະພາບ ຫຼື ຊີວິດ.....423
ມາດຕາ 478 ຄວາມເສຍຫາຍທາງດ້ານ ຊື່ສຽງ, ກຽດສັກສີ.....432
ມາດຕາ 479 ຄວາມເສຍຫາຍທາງດ້ານຈິດໃຈ.....434
ມາດຕາ 480 ການກຳນົດຄ່າເສຍຫາຍແຕ່ລະປະເພດ.....434
ມາດຕາ 481 ການຄິດໄລ່ຄ່າເສຍຫາຍ.....435
ກ. ຄວາມຮັບຜິດຊອບທີ່ເນື່ອງມາຈາກການລະເມີດ ຂອງຕົນເອງ.....436
ມາດຕາ 482 ຄວາມເສຍຫາຍທີ່ເນື່ອງຈາກການນຳໃຊ້ສິດເກີນຄວນ.....436
ມາດຕາ 483 ຄວາມຮັບຜິດຊອບຕໍ່ຄວາມເສຍຫາຍທີ່ເນື່ອງຈາກສະພາວະທີ່ຈຳເປັນ.....437
ມາດຕາ 484 ຄວາມຮັບຜິດຊອບຕໍ່ຄວາມເສຍຫາຍທີ່ເນື່ອງຈາກການປ້ອງກັນຕົວເກີນຂອບເຂດ..437
ມາດຕາ 485 ຄວາມຮັບຜິດຊອບຕໍ່ຄວາມເສຍຫາຍທີ່ຫຼາຍຄົນໄດ້ກໍ່ຂຶ້ນ.....438
ຂ. ຄວາມຮັບຜິດຊອບທີ່ເນື່ອງມາ ຈາກການລະເມີດຂອງບຸກຄົນອື່ນ, ຈາກສັດ, ຈາກວັດຖຸ ສິ່ງຂອງ ທີ່ຢູ່ໃນການຄຸ້ມຄອງ ຂອງຕົນ.....439
ມາດຕາ 486 ຄວາມຮັບຜິດຊອບຂອງຜູ້ໃຊ້ວຽກ.....439
ມາດຕາ 487 ຄວາມຮັບຜິດຊອບຂອງພໍ່ແມ່, ຜູ້ປົກຄອງ ຫຼື ຜູ້ຄຸ້ມຄອງ.....440
ມາດຕາ 488 ຄວາມຮັບຜິດຊອບຂອງຜູ້ເປັນເຈົ້າຂອງ ຫຼື ຜູ້ຄອບຄອງສັດ.....441
ມາດຕາ 489 ຄວາມຮັບຜິດຊອບຕໍ່ຄວາມເສຍຫາຍທີ່ເກີດຂຶ້ນຈາກວັດຖຸສິ່ງຂອງ.....443
ມາດຕາ 490 ຄວາມຮັບຜິດຊອບຕໍ່ຄວາມເສຍຫາຍຂອງເຈົ້າຂອງ ຫຼື ຜູ້ຄອບຄອງຕົ້ນໄມ້.....443
ມາດຕາ 491 ຄວາມຮັບຜິດຊອບຕໍ່ຄວາມເສຍຫາຍຂອງເຈົ້າຂອງເຮືອນ ຫຼື ສິ່ງປຸກສ້າງອື່ນ....444
ມາດຕາ 492 ຄວາມຮັບຜິດຊອບຕໍ່ຄວາມເສຍຫາຍຂອງຜູ້ຮັບເໝົາກໍ່ສ້າງ.....444
ມາດຕາ 493 ຄວາມຮັບຜິດຊອບຕໍ່ຄວາມເສຍຫາຍທີ່ເນື່ອງຈາກຜະລິດຕະພັນ ຫຼື ສິນຄ້າ.....445
ມາດຕາ 494 ຄວາມຮັບຜິດຊອບຕໍ່ຄວາມເສຍຫາຍທີ່ເກີດຈາກວັດຖຸອັນຕະລາຍ.....446
ມາດຕາ 495 ຄວາມຮັບຜິດຊອບຕໍ່ຄວາມເສຍຫາຍຕໍ່ສິ່ງແວດລ້ອມ.....447
ໝວດທີ 3 ການເຮັດວຽກງານແທນຜູ້ອື່ນໂດຍບໍ່ມີການມອບໝາຍ.....447

ມາດຕາ 496 ການເຮັດວຽກແທນຜູ້ອື່ນໂດຍບໍ່ມີການມອບໝາຍ.....447
ມາດຕາ 497 ເງື່ອນໄຂຂອງການເຮັດວຽກແທນຜູ້ອື່ນໂດຍບໍ່ມີການມອບໝາຍ.....448
ມາດຕາ 498 ພັນທະຂອງຜູ້ເຮັດວຽກແທນຜູ້ອື່ນໂດຍບໍ່ມີການມອບໝາຍ.....449
ມາດຕາ 499 ພັນທະຂອງຜູ້ເປັນເຈົ້າຂອງ ຫຼື ຜູ້ຄອບຄອງ.....449
ມາດຕາ 500 ການປົກປ້ອງຊີວິດ, ຊື່ສຽງ, ຊັບຂອງຜູ້ອື່ນ.....450
ໝວດທີ 4 ການຮັບຊັບສິ່ງຂອງ ຫຼື ຜົນປະໂຫຍດທີ່ຕົນບໍ່ມີສິດ.....451
ມາດຕາ 501 ການຮັບຊັບສິ່ງຂອງ ຫຼື ຜົນປະໂຫຍດທີ່ຕົນບໍ່ມີສິດ.....451
ມາດຕາ 502 ການຮັບຊັບສິ່ງຂອງ ຫຼື ຜົນປະໂຫຍດທີ່ຕົນບໍ່ມີສິດດ້ວຍຄວາມຫຼົງຜິດ.....452
ມາດຕາ 503 ການຮັບຊັບສິ່ງຂອງ ຫຼື ຜົນປະໂຫຍດທີ່ຕົນບໍ່ມີສິດໂດຍເຈດຕະນາ.....453
ມາດຕາ 504 ການມອບຊັບສິ່ງຂອງທີ່ຜູ້ມອບບໍ່ມີສິດທວງຄືນ.....454
ມາດຕາ 505 ການປະຕິບັດພັນທະກ່ອນກຳນົດເວລາ.....454
ມາດຕາ 506 ການປະຕິບັດພັນທະພາຍຫຼັງໝົດອາຍຸຄວາມ.....455
ມາດຕາ 507 ການປະຕິບັດສິ່ງໃດໜຶ່ງ ໂດຍຮູ້ວ່າບໍ່ມີພັນທະ.....455
ມາດຕາ 508 ການປະຕິບັດພັນທະຂອງຜູ້ອື່ນ.....456
ມາດຕາ 509 ການປະຕິບັດພັນທະທີ່ຜິດກົດໝາຍ.....456
ພາກທີ VII ການຄ້ຳປະກັນ.....460
ໝວດທີ 1 ຫຼັກການທົ່ວໄປ.....460
ມາດຕາ 510 ການຄ້ຳປະກັນ.....460
ມາດຕາ 511 ປະເພດການຄ້ຳປະກັນ.....460
ມາດຕາ 512 ລຳດັບບຸລິມະສິດຂອງການຄ້ຳປະກັນ.....461
ມາດຕາ 513 ການສືບຕໍ່ສິດຂອງເຈົ້າໜີ້ ຕໍ່ຊັບຄ້ຳປະກັນ.....461
ມາດຕາ 514 ການຊື້ ຫຼື ການເຊົ່າຊັບຄ້ຳປະກັນດ້ວຍຄວາມບໍລິສຸດໃຈ.....462
ມາດຕາ 515 ບຸລິມະສິດ ຕໍ່ຊັບທີ່ຊື້ມາດ້ວຍເງິນກູ້ຢືມ.....463
ມາດຕາ 516 ບຸລິມະສິດຂອງການຄ້ຳປະກັນດ້ວຍສັດລ້ຽງ.....463
ມາດຕາ 517 ບຸລິມະສິດ ຂອງການຄ້ຳປະກັນດ້ວຍເຄື່ອງປູກຂອງຝັງ.....464
ໝວດທີ 2 ການຄ້ຳປະກັນຕາມກົດໝາຍ.....465
ມາດຕາ 518 ການຄ້ຳປະກັນຕາມກົດໝາຍ.....465
ມາດຕາ 519 ບຸລິມະສິດຂອງການຄ້ຳປະກັນຕາມກົດໝາຍ.....465
ໝວດທີ 3 ການຄ້ຳປະກັນຕາມສັນຍາ.....467
ມາດຕາ 520 ການຄ້ຳປະກັນຕາມສັນຍາ.....467
ມາດຕາ 521 ຊັບທີ່ນຳມາຄ້ຳປະກັນ.....467
ມາດຕາ 522 ການກຳນົດລັກສະນະ ແລະ ການຕີມູນຄ່າຂອງຊັບ.....470
ມາດຕາ 523 ຊັບດຽວທີ່ນຳໄປຄ້ຳປະກັນກັບເຈົ້າໜີ້ຫຼາຍຄົນ.....471
ມາດຕາ 524 ບຸລິມະສິດການຄ້ຳປະກັນຕາມສັນຍາ.....472
ມາດຕາ 525 ຮູບແບບການຄ້ຳປະກັນຕາມສັນຍາ.....475
ກ. ການຈຳນຳ.....475

ມາດຕາ 526 ການຈຳນຳ.....475
ມາດຕາ 527 ປະເພດຂອງການຈຳນຳ 476
ກ 1. ການຈຳນຳດ້ວຍສັງຫາລິມະຊັບ.....477
ມາດຕາ 528 ການຈຳນຳດ້ວຍສັງຫາລິມະຊັບ.....477
ມາດຕາ 529 ເງື່ອນໄຂຂອງການຈຳນຳດ້ວຍສັງຫາລິມະຊັບ.....477
ມາດຕາ 530 ຜົນຂອງການຈຳນຳດ້ວຍສັງຫາລິມະຊັບ.....478
ມາດຕາ 531 ການສົ່ງຄືນ ແລະ ການຂາຍສັງຫາລິມະຊັບ.....479
ມາດຕາ 532 ການຈຳນຳທີ່ໂຮງຈຳນຳ.....480
ມາດຕາ 533 ການຈຳນຳດ້ວຍເອກະສານ.....480
ມາດຕາ 534 ການຈຳນຳດ້ວຍສິນຄ້າໃນສາງ.....481
ກ 2. ການຈຳນຳດ້ວຍອະສັງຫາລິມະຊັບ.....482
ມາດຕາ 535 ການຈຳນຳດ້ວຍອະສັງຫາລິມະຊັບ.....482
ມາດຕາ 536 ເງື່ອນໄຂຂອງການຈຳນຳດ້ວຍອະສັງຫາລິມະຊັບ.....482
ມາດຕາ 537 ຜົນການຈຳນຳດ້ວຍອະສັງຫາລິມະຊັບ.....483
ມາດຕາ 538 ການຈ່າຍຄ່າປົກປັກຮັກສາອະສັງຫາລິມະຊັບ.....484
ມາດຕາ 539 ການສົ່ງຄືນ ແລະ ການຂາຍອະສັງຫາລິມະຊັບ.....485
ກ 3. ການຈຳນຳດ້ວຍສິດ.....487
ມາດຕາ 540 ການຈຳນຳດ້ວຍສິດ.....487
ມາດຕາ 541 ການຈຳນຳດ້ວຍສິດທອງ.....487
ມາດຕາ 542 ການຈຳນຳດ້ວຍສິດອື່ນ.....488
ມາດຕາ 543 ການຈຳນຳດ້ວຍສິດຕໍ່ກິດຈະການໃດໜຶ່ງ ຫຼື ໝາກຜົນຂອງໂຄງການ.....488
ມາດຕາ 544 ເງື່ອນໄຂຂອງການຈຳນຳດ້ວຍສິດ.....489
ມາດຕາ 545 ຜົນຂອງການຈຳນຳດ້ວຍສິດ.....490
ຂ. ການຈຳນອງ.....491
ມາດຕາ 546 ການຈຳນອງ.....491
ມາດຕາ 547 ປະເພດການຈຳນອງ.....492
ຂ 1. ການຈຳນອງດ້ວຍອະສັງຫາລິມະຊັບ.....493
ມາດຕາ 548 ການຈຳນອງດ້ວຍອະສັງຫາລິມະຊັບ.....493
ມາດຕາ 549 ເງື່ອນໄຂຂອງການຈຳນອງດ້ວຍອະສັງຫາລິມະຊັບ.....493
ມາດຕາ 550 ຜົນຂອງການຈຳນອງດ້ວຍອະສັງຫາລິມະຊັບ.....494
ມາດຕາ 551 ສິດຂອງຜູ້ຮັບຈຳນອງຕໍ່ອະສັງຫາລິມະຊັບທີ່ນຳມາຈຳນອງ.....495
ຂ 2. ການຈຳນອງດ້ວຍສັງຫາລິມະຊັບ.....497
ມາດຕາ 552 ການຈຳນອງດ້ວຍສັງຫາລິມະຊັບ.....497
ມາດຕາ 553 ເງື່ອນໄຂການຈຳນອງດ້ວຍສັງຫາລິມະຊັບ.....497
ມາດຕາ 554 ຜົນຂອງການຈຳນອງດ້ວຍສັງຫາລິມະຊັບ.....498
ມາດຕາ 555 ສິດຂອງຜູ້ຮັບຈຳນອງຕໍ່ສັງຫາລິມະຊັບທີ່ນຳມາຈຳນອງ.....498

ຄ. ການຄ້ຳປະກັນດ້ວຍບຸກຄົນ ຫຼືນິຕິບຸກຄົນອື່ນ.....499
ມາດຕາ 556 ການຄ້ຳປະກັນດ້ວຍບຸກຄົນ ຫຼື ນິຕິບຸກຄົນ.....499
ມາດຕາ 557 ຮູບການຂອງສັນຍາຄ້ຳປະກັນດ້ວຍບຸກຄົນ ຫຼື ນິຕິບຸກຄົນອື່ນ.....500
ມາດຕາ 558 ຂອບເຂດຄວາມຮັບຜິດຊອບຂອງຜູ້ຄ້ຳປະກັນ.....500
ມາດຕາ 559 ການຄ້ຳປະກັນຮ່ວມ.....501
ມາດຕາ 560 ການເສຍຊີວິດ ຫຼື ການເສຍຄວາມສາມາດທາງດ້ານການປະພຶດຂອງຜູ້ຄ້ຳປະກັນ....502
ມາດຕາ 561 ການພົ້ນຈາກການຄ້ຳປະກັນ.....503
ໝວດທີ 4 ການຈົດທະບຽນ, ການສະລະບຸລິມະສິດ ແລະ ການໂອນການຄ້ຳປະກັນ....504
ມາດຕາ 562 ການຈົດທະບຽນ.....504
ມາດຕາ 563 ການລົບລ້າງການຈົດທະບຽນການຄ້ຳປະກັນ.....505
ມາດຕາ564 ການສະລະບຸລິມະສິດ ແລະ ການໂອນການຄ້ຳປະກັນ.....506
ພາກທີ VIII ການສືບທອດມູນມໍຣະດົກ.....510
ໝວດທີ 1 ຫຼັກການສືບທອດມູນມໍຣະດົກ.....510
ມາດຕາ 565 ມູນມໍຣະດົກ.....510
ມາດຕາ 566 ການສືບທອດມູນມໍຣະດົກ.....510
ມາດຕາ 567 ມູນມໍຣະດົກຂອງຜູ້ຖືກສານຕັດສິນເປັນຜູ້ເສຍຊີວິດ.....511
ມາດຕາ 568 ວັນເວລາເປີດການສືບທອດມູນມໍຣະດົກ.....512
ມາດຕາ 569 ບ່ອນເປີດການສືບທອດມູນມໍຣະດົກ.....513
ມາດຕາ 570 ມູນມໍຣະດົກທີ່ຈະນຳມາແບ່ງປັນ.....513
ມາດຕາ 571 ປະເພດການສືບທອດ.....514
ໝວດທີ 2 ການສືບທອດມູນມໍຣະດົກຕາມກົດໝາຍ.....514
ມາດຕາ 572 ການສືບທອດມູນມໍຣະດົກຕາມກົດໝາຍ.....514
ມາດຕາ 573 ກໍລະນີທີ່ພາໃຫ້ມີການສືບທອດມູນມໍຣະດົກຕາມກົດໝາຍ.....515
ມາດຕາ 574 ຜູ້ສືບທອດມູນມໍຣະດົກຕາມກົດໝາຍ.....516
ມາດຕາ 575 ລຳດັບໃນການຮັບມູນມໍຣະດົກ.....517
ມາດຕາ 576 ການແບ່ງປັນມູນມໍຣະດົກລະຫວ່າງຜົວ ຫຼື ເມຍທີ່ຍັງມີຊີວິດຢູ່ ແລະ ລູກ.....517
ມາດຕາ 577 ການແບ່ງປັນມູນມໍຣະດົກລະຫວ່າງພວກລູກຂອງຜູ້ເສຍຊີວິດ.....518
ມາດຕາ 578 ການແບ່ງປັນມູນມໍຣະດົກລະຫວ່າງຜົວ ຫຼື ເມຍທີ່ຍັງມີຊີວິດຢູ່ ແລະ ຍາດສາຍຕັ້ງ.519
ມາດຕາ 579 ການແບ່ງປັນມູນມໍຣະດົກລະຫວ່າງຍາດສາຍຕັ້ງ.....520
ມາດຕາ 580 ການແບ່ງປັນມູນມໍຣະດົກລະຫວ່າງຜົວ ຫຼື ເມຍ ແລະ ຍາດສາຍຂວາງ.....520
ມາດຕາ 581 ການແບ່ງປັນມູນມໍຣະດົກລະຫວ່າງຍາດສາຍຂວາງ.....521
ມາດຕາ 582 ການແບ່ງປັນມູນມໍຣະດົກກໍລະນີມີແຕ່ຜົວ ຫຼື ເມຍ.....521
ມາດຕາ 583 ການແບ່ງປັນມູນມໍຣະດົກ ລະຫວ່າງຫົວໜ້າຄອບຄົວ ແລະ ຜູ້ຮັບໃຊ້.....521
ມາດຕາ 584 ມູນມໍຣະດົກຂອງພິກຂຸ, ສາມະເນນ ຫຼື ນັກບວດອື່ນ.....522
ມາດຕາ 585 ມູນມໍຣະດົກທີ່ບໍ່ມີຜູ້ສືບທອດອື່ນ.....523
ມາດຕາ 586 ສິດສືບທອດມູນມໍຣະດົກຂອງຜົວເມຍທີ່ແຍກກັນຢູ່.....524

ມາດຕາ 587 ການແບ່ງປັນຄ່າປ່ວຍແປງຈິດໃຈ ແລະ ເງິນອຸດໜູນການເສຍຊີວິດ.....524
ມາດຕາ 588 ຜູ້ສືບທອດມູນມໍຣະດົກແທນທີ່ກັນ.....525
ມາດຕາ 589 ເງື່ອນໄຂຂອງການສືບທອດມູນມໍຣະດົກແທນທີ່ກັນ.....526
ໝວດທີ 3 ການສືບທອດມູນມໍຣະດົກຕາມພິໄນກຳ.....527
ມາດຕາ 590 ພິໄນກຳ.....527
ມາດຕາ 591 ສິດໃນການເຮັດພິໄນກຳ.....527
ມາດຕາ 592 ຂອບເຂດສິດໃນການເຮັດພິໄນກຳ.....528
ມາດຕາ 593 ຮູບການການເຮັດພິໄນກຳ.....529
ມາດຕາ 594 ພິໄນກຳເປັນລາຍລັກອັກສອນ.....529
ມາດຕາ 595 ຜູ້ບໍ່ມີສິດຮັບຊັບຕາມພິໄນກຳເປັນລາຍລັກອັກສອນ.....531
ມາດຕາ 596 ພິໄນກຳທາງປາກເປົ່າ.....531
ມາດຕາ 597 ຜູ້ສືບທອດສຳຮອງ.....533
ມາດຕາ 598 ສິດຂອງຜູ້ສືບທອດມູນມໍຣະດົກຕາມພິໄນກຳ.....533
ມາດຕາ 599 ຜູ້ຄຸ້ມຄອງມູນມໍຣະດົກຕາມພິໄນກຳ.....534
ມາດຕາ 600 ການປ່ຽນແປງ ຫຼື ລົບລ້າງພິໄນກຳ.....535
ມາດຕາ 601 ສາເຫດທີ່ພາໃຫ້ພິໄນກຳຕົກໄປ.....536
ມາດຕາ 602 ພິໄນກຳເປັນໂມຄະ.....537
ມາດຕາ 603 ການແຕ່ງຕັ້ງຜູ້ປະຕິບັດພິໄນກຳ.....539
ມາດຕາ 604 ສິດ ແລະ ພັນທະຂອງຜູ້ປະຕິບັດພິໄນກຳ.....540
ມາດຕາ 605 ການເປີດພິໄນກຳ.....541
ໝວດທີ 4 ການຮັບ, ການສະລະ ແລະ ການເສຍສິດສືບທອດມູນມໍຣະດົກ.....541
ກ. ການຮັບ ແລະ ການສະລະມູນມໍຣະດົກ.....541
ມາດຕາ 606 ການສະເໜີເປີດການສືບທອດມູນມໍຣະດົກ.....541
ມາດຕາ 607 ການເຮັດບັນຊີມູນມໍຣະດົກ.....543
ມາດຕາ 608 ອາຍຸຄວາມໃນການທວງເອົາມູນມໍຣະດົກ.....544
ມາດຕາ 609 ການແບ່ງປັນມູນມໍຣະດົກທີ່ຢູ່ໃນການຄຸ້ມຄອງຂອງຜູ້ມີສິດສືບທອດຜູ້ໃດໜຶ່ງ....545
ມາດຕາ 610 ການຮັບມູນມໍຣະດົກ.....546
ມາດຕາ 611 ມູນມໍຣະດົກທີ່ບໍ່ໄດ້ຮັບເອົາພາຍໃນກຳນົດເວລາ.....547
ມາດຕາ 612 ການສະລະມູນມໍຣະດົກ.....548
ມາດຕາ 613 ການສະລະມູນມໍຣະດົກຂອງຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດ.....549
ມາດຕາ 614 ສິດຂອງຜູ້ສະລະມູນມໍຣະດົກ.....550
ຂ. ການເສຍສິດສືບທອດມູນມໍຣະດົກ.....551
ມາດຕາ 615 ການເສຍສິດສືບທອດມູນມໍຣະດົກ.....551
ມາດຕາ 616 ການສໍ້ໂກງ, ການຍັກຍອກມູນມໍຣະດົກ.....552
ມາດຕາ 617 ການເສຍສິດສືບທອດມູນມໍຣະດົກຂອງ ພໍ່, ແມ່ ແລະ ລູກຕາມຄຳຕັດສິນຂອງສານ.553
ມາດຕາ 618 ການເສຍສິດສືບທອດມູນມໍຣະດົກຕາມກົດໝາຍ ແລະ ຕາມພິໄນກຳ.....554

ມາດຕາ 619 ການລົບລ້າງການເສຍສິດສືບທອດ.....557
ໝວດທີ 5 ການຄຸ້ມຄອງມູນມໍຣະດົກ ແລະ ຄວາມຮັບຜິດຊອບຂອງຜູ້ສືບທອດຕໍ່ໜີ້ສິນ ຂອງເຈົ້າມູນມໍຣະດົກ.....558
ກ. ການຄຸ້ມຄອງມູນມໍຣະດົກ.....558
ມາດຕາ 620 ການຄຸ້ມຄອງມູນມໍຣະດົກ.....558
ມາດຕາ 621 ບຸກຄົນທີ່ບໍ່ມີສິດເປັນຜູ້ຄຸ້ມຄອງມູນມໍຣະດົກ.....55
ມາດຕາ 622 ສິດ ແລະ ໜ້າທີ່ຂອງຜູ້ຄຸ້ມຄອງມູນມໍຣະດົກ.....560
ມາດຕາ 623 ການຄຸ້ມຄອງມູນມໍຣະດົກຂອງຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດ.....561
ມາດຕາ 624 ການລົບລ້າງ, ປ່ຽນແປງການຄຸ້ມຄອງມູນມໍຣະດົກ.....562
ຂ. ຄວາມຮັບຜິດຊອບຂອງຜູ້ສືບທອດຕໍ່ໜີ້ສິນຂອງເຈົ້າມູນມໍຣະດົກ.....563
ມາດຕາ 625 ການຊຳລະໜີ້ສິນ.....563
ມາດຕາ 626 ກຳນົດເວລາໃນການທວງໜີ້ສິນ.....565
ມາດຕາ 627 ຂອບເຂດສິດໃນການຊື້ຂາດມູນມໍຣະດົກ.....566
ມາດຕາ 628 ການແບ່ງປັນມູນມໍຣະດົກທີ່ບໍ່ສາມາດຕົກລົງກັນໄດ້.....568
ພາກທີ IX ບົດບັນຍັດສຸດທ້າຍ.....570
ມາດຕາ 629 ການຈັດຕັ້ງປະຕິບັດ.....570
ມາດຕາ 630 ຜົນສັກສິດ.....571

ບົດອະທິບາຍປະມວນກົດໝາຍແພ່ງ

ພາກທີ I ບົດບັນຍັດທົ່ວໄປ

(ມາດຕາ 1-62)

ປະມວນກົດໝາຍແພ່ງ

ພາກທີ I
ບົດບັນຍັດທົ່ວໄປ

ໝວດທີ 1
ຈຸດປະສົງ ແລະ ຂອບເຂດການນຳໃຊ້ປະມວນກົດໝາຍແພ່ງ

ມາດຕາ 1 ຈຸດປະສົງຂອງປະມວນກົດໝາຍແພ່ງ

ປະມວນກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການເກີດ, ການປ່ຽນແປງ, ການສິ້ນສຸດ ສິດ ແລະ ພັນທະ ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ເພື່ອຮັບປະກັນ ຄວາມສະເໝີພາບ, ຍຸຕິທຳ, ຖືກຕ້ອງຕາມກົດໝາຍ, ຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍ ຂອງສັງຄົມ ແນໃສ່ປົກປ້ອງ ສິດ ແລະ ຜົນປະໂຫຍດ ອັນຊອບທຳ ຂອງບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ, ລັດ ແລະ ລວມໝູ່ ປະກອບສ່ວນເຂົ້າໃນການຕອບສະໜອງຄວາມຕ້ອງການທາງດ້ານວັດຖຸ ແລະ ຈິດໃຈຂອງປະຊາຊົນ, ປົກປັກຮັກສາຄວາມສາມັກຄີປອງດອງ ຂອງປະຊາຊົນລາວ ບັນດາເຜົ່າ ແລະ ຮີດຄອງປະເພນີອັນດີງາມຂອງຊາດ ແລະ ພັດທະນາເສດຖະກິດ-ສັງຄົມ ໃຫ້ເຂັ້ມແຂງ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນວ່າ ປະມວນກົດໝາຍແພ່ງ ແນ່ໃສ່ດັດປັບສະເພາະແຕ່ບັນດາສາຍພົວພັນຕ່າງໆ ທີ່ກ່ຽວຂ້ອງໃນທາງແພ່ງ ຊຶ່ງແຕກຕ່າງຈາກສາຍພົວພັນອື່ນ ເຊັ່ນ ສາຍພົວພັນອາຍາ, ບໍລິຫານ ແລະ ການປົກຄອງ; ເພື່ອຮັບຮູ້ ແລະ ດັດປັບສາຍພົວພັນທາງແພ່ງໃດໜຶ່ງ ໃຫ້ສອດຄ່ອງກົມກຽວກັນກັບສາຍພົວພັນທາງແພ່ງ.
ຕົວຢ່າງ	ໃຫ້ເບິ່ງຕົວຢ່າງແຕ່ລະມາດຕາ ຂອງບົດອະທິບາຍປະມວນກົດໝາຍແພ່ງ
ເຫດຜົນໃນການສ້າງໃໝ່	ອີງຕາມບົດຮຽນໃນການສ້າງກົດໝາຍ ຕາມກົດໝາຍວ່າດ້ວຍການສ້າງນິຕິກຳ ປີ 2012 ໂຄງສ້າງຂອງກົດໝາຍຂອງ ສປປ ລາວ ຕ້ອງປະກອບມີ ມາດຕາທີ່ກຳນົດ ຈຸດປະສົງຂອງກົດໝາຍ ເພື່ອອະທິບາຍວ່າກົດໝາຍມີເປົ້າໝາຍດັດປັບແນວໃດ ໃນກົດໝາຍ. ໂດຍພື້ນຖານແລ້ວ ປະມວນກົດໝາຍແພ່ງ ເປັນກົດໝາຍທີ່ຜັນຂະຫຍາຍມາຈາກ ເນື້ອໃນຈິດໃຈຂອງ ລັດຖະທຳມະນູນ ທີ່ຖືເປັນກົດໝາຍພື້ນຖານຂອງລັດໂດຍສະເພາະພາກສິດ ແລະ ໜ້າທີ່ພື້ນຖານ ຂອງພົນລະເມືອງ ໄວ້ໃນປະມວນກົດໝາຍແພ່ງ. ສະນັ້ນ, ຈຶ່ງເວົ້າໄດ້ວ່າ ປະມວນກົດໝາຍແພ່ງເປັນກົດໝາຍພື້ນຖານຂອງສັງຄົມ ທີ່ກຳນົດສິດ ແລະ ພັນທະ ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ (ພົນລະເມືອງແຕ່ລະຄົນ, ຄອບຄົວ, ນິຕິບຸກຄົນ ແລະ ການຈັດຕັ້ງຕ່າງໆ) ເພື່ອແກ້ໄຂຂໍ້ຂັດແຍ່ງ, ທັງເປັນການປ້ອງກັນບໍ່ໃຫ້ເກີດມີຂໍ້ຂັດແຍ່ງ ແນໃສ່ສ້າງຄວາມສະຫງົບ, ຄວາມຍຸຕິທຳ, ສ້າງລະບຽບທາງສັງຄົມ ທີ່ສອດຄ່ອງກັບກົດໝາຍ.

ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 1 ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2015.
ມາດຕາອ້າງອີງ	ລັດຖະທຳມະນູນແຫ່ງ ສປປ ລາວ ປີ 2015, ພາກ IV ສິດ ແລະ ພັນທະ ຂອງພົນລະເມືອງລາວ, ມາດຕາ 34-51.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 2 ປະມວນກົດໝາຍແພ່ງ

ປະມວນກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການເກີດ, ການປ່ຽນແປງ, ການສິ້ນສຸດ ສິດ ແລະ ພັນທະ ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ເພື່ອຮັບປະກັນ ຄວາມສະເໝີພາບ, ຍຸຕິທຳ, ຖືກຕ້ອງຕາມກົດໝາຍ, ຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບร้อย ຂອງສັງຄົມ ແນໃສ່ປົກປ້ອງ ສິດ ແລະ ຜົນປະ�โยດ ອັນຊອບທຳ ຂອງບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ, ລັດ ແລະ ລວມໝູ່ ປະກອບສ່ວນເຂົ້າໃນການຕອບສະໜອງຄວາມຕ້ອງການທາງດ້ານວັດຖຸ ແລະ ຈິດໃຈຂອງປະຊາຊົນ, ປົກປັກຮັກສາຄວາມສາມັກຄີປອງດອງ ຂອງປະຊາຊົນລາວ ບັນດາເຜົ່າ ແລະ ຮິດຄອງປະເພນີອັນດີງາມຂອງຊາດ ແລະ ພັດທະນາເສດຖະກິດ-ສັງຄົມ ໃຫ້ເຂັ້ມແຂງ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນວ່າ ປະມວນກົດໝາຍແພ່ງ ແນໃສ່ດັດປັບສະເພາະ ແຕ່ບັນດາສາຍພົວພັນຕ່າງໆ ທີ່ກ່ຽວຂ້ອງໃນທາງແພ່ງ ຊຶ່ງແຕກຕ່າງຈາກສາຍພົວພັນອື່ນເຊັ່ນ ສາຍພົວພັນອາຍາ, ບໍລິຫານ ແລະ ການປົກຄອງ; ເພື່ອດັດປັບສາຍພົວພັນທາງແພ່ງໃດໜຶ່ງ ໃຫ້ສອດຄ່ອງກົມກຽວກັນ ກັບ ສາຍພົວພັນທາງແພ່ງ.
ຕົວຢ່າງ	ໃຫ້ເບິ່ງຕົວຢ່າງແຕ່ລະມາດຕາ ຂອງບົດອະທິບາຍປະມວນກົດໝາຍແພ່ງ.
ເຫດຜົນໃນການສ້າງໃໝ່	ເພື່ອຈຳແນກໃຫ້ເຫັນວ່າ ນອກຈາກການໃຊ້ປະມວນກົດໝາຍແພ່ງແລ້ວ ຍັງຕ້ອງໄດ້ໃຊ້ກົດໝາຍອື່ນໆ ທີ່ກ່ຽວຂ້ອງນຳອີກ ແລະ ບົດບັນຍັດຂອງກົດໝາຍ ທີ່ກ່ຽວຂ້ອງ ໃນເລື່ອງສະເພາະນັ້ນ ຈະເປັນບ່ອນອີງໃນການນຳໃຊ້ ແກ້ໄຂຂໍ້ຂັດແຍ່ງສາຍພົວພັນທາງແພ່ງ ເປັນສາຍພົວພັນທີ່ກວ້າງຂວາງ ແລະ ຍັງຕິດພັນກັບສາຍພົວພັນອື່ນໆ ເຊັ່ນ ສາຍພົວພັນທາງດ້ານບໍລິຫານ, ການປົກຄອງ, ການຮັກສາ ແລະ ການປົກປ້ອງສິ່ງແວດລ້ອມ ແລະ ອື່ນໆ ສະນັ້ນ, ເພື່ອເຮັດໃຫ້ການນຳໃຊ້ປະມວນກົດໝາຍແພ່ງ ໃຫ້ສອດຄ່ອງກັບຕົວຈິງ ແລະ ເງື່ອນໄຂຫຼາຍເທົ່າທີ່ຈະຫຼາຍໄດ້ ຈຶ່ງມີຄວາມຈຳເປັນຕ້ອງກຳນົດຫຼັກການນຳໃຊ້ ທີ່ກຳນົດໄວ້ໃນ ມາດຕາ 5 ນີ້ ເພື່ອໃຫ້ຊັດເຈນ ແລະ ຈະແຈ້ງ ລະຫວ່າງ ຜົນສັກສິດຂອງປະມວນກົດໝາຍແພ່ງ ແລະ ກົດໝາຍອື່ນໆ ທີ່ກ່ຽວຂ້ອງ.

ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 5 ວັກ 1 ແລະ ມາດຕາ 4 ວັກ 1 ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2015; ມາດຕາ 5 ວັກ 2 ແລະ ມາດຕາ 4 ວັກ 2, ວັກ 3 ຂອງປະມວນກົດໝາຍແພ່ງ ຫວຽດນາມ ປີ 2015; ມາດຕາ 5 ວັກ 3: ມາດຕາ 4 ວັກ 3 ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2015.
ມາດຕາອ້າງອີງ	ມາດຕາ 142, ແລະ 143 ຂອງກົດໝາຍວ່າດ້ວຍທີ່ດິນ ປີ 2019; ດຳລັດວ່າດ້ວຍການແຕ່ງດອງລະຫວ່າງພົນລະເມືອງລາວ ກັບ ຄົນຕ່າງປະເທດ, ຄົນຕ່າງດ້າວ ແລະ ຄົນບໍ່ມີສັນຊາດ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 3 ການອະທິບາຍຄຳສັບ

ຄຳສັບ ທີ່ນຳໃຊ້ໃນປະມວນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. ສາຍພົວພັນທາງແພ່ງ ໝາຍເຖິງ ສາຍພົວພັນ ທີ່ມີລັກສະນະຊັບສົມບັດ ຫຼື ບໍ່ມີລັກ ສະນະຊັບສົມບັດ ລະຫວ່າງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ດ້ວຍກັນ ກ່ຽວກັບ ວັດຖຸ ປະສົງ ຫຼື ເປົ້າໝາຍໃດໜຶ່ງ;
2. ເຫດບັງເອີນ ໝາຍເຖິງ ເຫດການທີ່ເກີດຂຶ້ນຢ່າງກະທັນຫັນໂດຍບໍ່ຄາດຄິດມາກ່ອນ ເຊັ່ນ ການເຈັບເປັນກະທັນຫັນ ແລະ ຮ້າຍແຮງ, ອຸບປະຕິເຫດ ຊຶ່ງພາໃຫ້ລູກໜີ້ ບໍ່ສາມາດ ປະຕິບັດພັນທະຂອງຕົນໄດ້;
3. ເຫດສຸດວິໄສ ໝາຍເຖິງ ເຫດການ ທີ່ບໍ່ສາມາດຄາດຄະເນ ແລະ ຄວບຄຸມໄດ້ ເຊັ່ນ ນ້ຳ ຖ້ວມ, ຟ້າ ຜ່າ, ແຜ່ນດິນໄຫວ, ສົງຄາມ ຊຶ່ງພາໃຫ້ລູກໜີ້ ບໍ່ສາມາດປະຕິບັດພັນທະຂອງ ຕົນໄດ້;
4. ຄ່າເສຍຫາຍ ໝາຍເຖິງ ຈຳນວນເງິນ ຫຼື ວັດຖຸສິ່ງຂອງ ຂອງຜູ້ຮັບຜິດຊອບ ເພື່ອໃຊ້ແທນ ຄວາມເສຍຫາຍ ທີ່ເກີດຂຶ້ນແກ່ຜູ້ອື່ນ;
5. ຄ່າປ່ວຍການ ໝາຍເຖິງ ຈຳນວນເງິນ ຫຼື ວັດຖຸສິ່ງຂອງ ຂອງຜູ້ຮັບຜິດຊອບ ເພື່ອທົດແທນ ລາຍໄດ້ຂອງຜູ້ຖືກເສຍຫາຍ ທີ່ຄວນຈະໄດ້ຮັບຈາກວຽກງານ ຫຼື ເວລາທີ່ເສຍໄປ;
6. ຄ່າປ່ວຍການຊັບ ໝາຍເຖິງ ຈຳນວນເງິນຂອງລູກໜີ້ ທີ່ທົດແທນຄ່າເສຍຫາຍ ໃຫ້ແກ່ເຈົ້າ ໜີ້ ຊຶ່ງຄວນໄດ້ຮັບ ຍ້ອນລູກໜີ້ບໍ່ປະຕິບັດພັນທະຂອງຕົນ;
7. ຄ່າປົວແປງຈິດໃຈ ໝາຍເຖິງ ຈຳນວນເງິນທີ່ຄອບຄົວຂອງຜູ້ຖືກເສຍຫາຍໄດ້ຮັບ ເພື່ອເປັນ ການທົດແທນຄ່າເສຍຫາຍ ທີ່ເນື່ອງຈາກການເສຍຊີວິດຂອງຜູ້ກ່ຽວ;
8. ເຈົ້າໜີ້ ໝາຍເຖິງ ຜູ້ມີສິດທວງໃຫ້ລູກໜີ້ປະຕິບັດພັນທະໃດໜຶ່ງ;
9. ລູກໜີ້ ໝາຍເຖິງ ຜູ້ມີພັນທະປະຕິບັດສິ່ງໃດໜຶ່ງ ເຊັ່ນ ມອບຊັບສິ່ງຂອງ, ການປະຕິບັດ ວຽກງານ, ຈ່າຍເງິນ ຫຼື ບໍ່ປະຕິບັດສິ່ງໃດໜຶ່ງເພື່ອຜົນປະໂຫຍດຂອງເຈົ້າໜີ້;
10. ນິຕິກຳ ໝາຍເຖິງ ນິຕິກຳທາງແພ່ງ;
11. ສະພາວະທີ່ຈຳເປັນ ໝາຍເຖິງ ການກະທຳດ້ວຍຄວາມຈຳເປັນຂອງບຸກຄົນໃດໜຶ່ງ ຊຶ່ງ ບໍ່ສາມາດນຳໃຊ້ວິທີອື່ນ ເພື່ອຫຼີກເວັ້ນໄພອັນຕະລາຍທີ່ຂົ່ມຂູ່ຜົນປະໂຫຍດຂອງລັດ ຫຼື ຂອງບຸກຄົນອື່ນ. ແຕ່ຜົນເສຍຫາຍ ທີ່ເກີດຈາກການກະທຳນັ້ນ ຕ້ອງມີມູນຄ່າໜ້ອຍກວ່າ ຜົນເສຍຫາຍ ທີ່ຈະເກີດຂຶ້ນຈາກໄພອັນຕະລາຍດັ່ງກ່າວ;

12. ຜູ້ໃຊ້ວຽກ ໝາຍເຖິງ ຜູ້ທີ່ໃຊ້ໃຫ້ບຸກຄົນໃດໜຶ່ງ ຊຶ່ງຢູ່ໃນການຄຸ້ມຄອງຂອງຕົນ ປະຕິບັດໜ້າທີ່ຕາມຄຳສັ່ງ ຫຼື ຄຳແນະນຳຂອງຕົນ;
13. ສິດທວງ ໝາຍເຖິງ ສິດຂອງຝ່າຍໜຶ່ງ ຊຶ່ງຮຽກຮ້ອງໃຫ້ອີກຝ່າຍໜຶ່ງ ປະຕິບັດພັນທະຂອງຕົນ ຕາມສັນຍາ ຫຼື ກົດໝາຍ.

ຈຸດປະສົງ	ເພື່ອກຳນົດໃຫ້ເຂົ້າໃຈ ຄວາມໝາຍຂອງຄຳສັບທີ່ນຳໃຊ້ ໃນປະມວນກົດໝາຍແພ່ງເທົ່ານັ້ນ.
ຕົວຢ່າງ	**ສາຍພົວພັນທາງແພ່ງ** **1. ສາຍພົວພັນທີ່ມີລັກສະນະຊັບສິນບັດ:** **ກ** (ພໍ່) ໄດ້ປະສົບອຸບປະຕິເຫດ ພາໃຫ້ເສຍຊີວິດ, ເກີດມີສາຍພົວພັນກ່ຽວກັບຊັບສິນຂອງ **ກ** ລະຫວ່າງ **ກ** (ພໍ່), **ຂ** (ແມ່) ແລະ **ຄ** (ລູກ) ຊຶ່ງເປັນສາຍພົວພັນມູນມໍຣະດົກ. ສາຍພົວພັນລະຫວ່າງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ: **ຄ** ເປັນຜູ້ພັດທະນາໂປຣກລາມທີ່ເກັ່ງທີ່ສຸດ, ລາວຮຽນຈົບປະລິນຍາເອກດ້ານນີ້ຈາກຕ່າງປະເທດ ແລະ ໄດ້ຮ່ວມຮຸ້ນກັບໝູ່ ສອງຄົນ **ງ** ແລະ **ຈ** ສ້າງຕັ້ງບໍລິສັດພັດທະນາຊອບແວ ABC ໃນນັ້ນ **ຄ** ມີຮຸ້ນ 30% ໝາຍຄວາມວ່າ **ຄ** ເປັນທັງພະນັກງານຂອງບໍລິສັດ ABC ແລະ ທັງເປັນເຈົ້າຂອງກິດຈະການ (ມີຮຸ້ນຢູ່ 30%). **2. ສາຍພົວພັນທີ່ບໍ່ມີລັກສະນະຊັບສິນບັດ:** **ຄ** ເປັນລູກ ຂອງ **ກ** (ພໍ່) ແລະ **ຂ** (ແມ່) ນີ້ແມ່ນສາຍພົວພັນພໍ່ແມ່ລູກ ຊຶ່ງເປັນສາຍພົວພັນຄອບຄົວ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງຂຶ້ນໃໝ່ ສ່ວນເນື້ອໃນຂອງບັນດາຄຳສັບເຫຼົ່ານີ້: ຄ່າປ່ວຍການ, ຄ່າປ່ວຍການຊັບ, ຄ່າເສຍຫາຍ, ເຈົ້າໜີ້, ລູກໜີ້, ສະພາວະຈຳເປັນ, ຜູ້ໃຊ້ວຽກ, ເຫດສຸດວິໄສ, ເຫດບັງເອີນ ຍັງຮັກສາໄວ້ຄືເກົ່າ ແລະ ສ່ວນຫຼາຍ ເອົາມາຈາກ ມາດຕາ 3 ຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ຂໍ້ຜູກພັນນອກສັນຍາ; ກົດໝາຍວ່າດ້ວຍຄອບຄົວ, ກົດໝາຍວ່າດ້ວຍການສືບທອດມູນມໍຣະດົກ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 3 ຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ຂໍ້ຜູກພັນນອກສັນຍາ.
ຂໍ້ມູນອື່ນ ຫຼື ປະເພນີສານ	ນອກຈາກ ບັນດາຄຳສັບລວມ ທີ່ໄດ້ກຳນົດໃນມາດຕາ 3 ແລ້ວ ຍັງມີຄຳສັບທີ່ມີຄວາມໝາຍສະເພາະ ຊຶ່ງໄດ້ກຳນົດໄວ້ໃນພາກ, ໝວດ ທີ່ກ່ຽວຂ້ອງ ຂອງປະມວນກົດໝາຍແພ່ງ ແລະ ໃນກົດໝາຍອື່ນທີ່ກ່ຽວຂ້ອງ.

ມາດຕາ 4 ນະໂຍບາຍກ່ຽວກັບປະມວນກົດໝາຍແພ່ງ

ລັດ ຊຸກຍູ້ ສົ່ງເສີມ ການເຄົາລົບ, ນຳໃຊ້ສິດ ແລະ ປະຕິບັດພັນທະພື້ນຖານ ຂອງພົນລະເມືອງ ເຊັ່ນ ສິດສະເໝີພາບຕໍ່ໜ້າກົດໝາຍ, ສິດເສລີພາບ ແລະ ຄວາມສະໝັກໃຈ, ສິດຕໍ່ຊັບ, ກຳມະສິດ, ສິດ ແລະ ພັນທະໃນການສ້າງ ແລະ ປະຕິບັດສາຍພົວພັນທາງແພ່ງ ລວມທັງການປົກປ້ອງສິດ ແລະ ຜົນປະໂຫຍດທີ່ເກີດຂຶ້ນຈາກສາຍພົວພັນທາງແພ່ງ ຕາມທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ ແລະ ກົດໝາຍ.

ລັດ ສ້າງເງື່ອນໄຂ ອຳນວຍຄວາມສະດວກ ໃຫ້ແກ່ສາຍພົວພັນທາງແພ່ງ ດ້ວຍການວາງນະໂຍບາຍ, ກຳນົດລະບຽບການ, ໂຄສະນາ, ສຶກສາອົບຮົມກົດໝາຍໃຫ້ປະຊາຊົນຮັບຮູ້, ເຂົ້າໃຈ ເພື່ອຮັບປະກັນໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ໄດ້ຮັບການປົກປ້ອງສິດ, ຜົນປະ�โຫຍດ ແລະ ປະຕິ ບັດພັນທະຂອງຕົນ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນ ເຖິງໜ້າທີ່ຂອງລັດ ໃນການສົ່ງເສີມ ແລະ ປົກປ້ອງສິດ ແລະ ພັນທະພື້ນຖານ ຂອງພົນລະເມືອງ ກໍຄືການປົກປ້ອງສາຍພົວພັນທາງແພ່ງ ແລະ ສາຍພົວພັນກົດໝາຍອື່ນ. ເພື່ອກຳນົດໃຫ້ເຫັນວ່າ ລັດມີນະ�โยบายຊຸກຍູ້ ແລະ ສ້າງເງື່ອນໄຂ ອຳນວຍຄວາມສະດວກ ໃຫ້ທຸກຄົນປະຕິບັດກົດໝາຍ.
ຕົວຢ່າງ	**ກ** ມີລູກສາວ 1 ຄົນ (ຂ) ແລະ ລູກຊາຍ 1 ຄົນ (ຄ), ກ່ອນເສຍຊີວິດ **ກ** ໄດ້ຂຽນພິໄນກຳ ມອບຊັບສົມບັດຂອງຕົນເອງທັງໝົດໃຫ້ລູກຊາຍ **ຄ** ຜູ້ດຽວ ປະມວນກົດໝາຍຮັບຮູ້ສິດສ່ວນບຸກຄົນ ແລະ ເສລີພາບ ໃນການກະທຳສິ່ງໃດສິ່ງໜຶ່ງ ທີ່ບໍ່ຂັດກົດໝາຍ, ພິໄນກຳທີ່ **ກ** ສ້າງຂຶ້ນນັ້ນ ກໍມີຜົນສັກສິດ ແຕ່ພາຍໃຕ້ພາກ VIII, ມາດຕາ 592 (2) ທີ່ກຳນົດຂອບເຂດສິດ ໃນການເຮັດພິໄນກຳ ຊຶ່ງໃນກໍລະນີ ທີ່ເຈົ້າມູນມໍຣະດົກ ມີລູກສອງຄົນ, ຖ້າມູນມໍຣະດົກສາມາດເຮັດພິໄນກຳໃຫ້ລູກຜູ້ໃດຜູ້ໜຶ່ງ ຫຼື ຜູ້ອື່ນ ບໍ່ເກີນໜຶ່ງສ່ວນສາມ ຂອງຊັບທັງໝົດ. ສ່ວນທີ່ເກີນຈາກພິໄນກຳນີ້ ຖືເປັນ�โมຄະ ແລະ ຕ້ອງນຳມາແບ່ງກັນ ລະຫວ່າງ ພວກລູກ **ຂ** ແລະ **ຄ** ຕື່ມອີກ. ຖ້າຫາກ **ຂ** ຫຼື **ຄ** ບໍ່ເຫັນດີ ກໍສາມາດຮ້ອງຟ້ອງໃຫ້ສານແກ້ໄຂຂໍ້ຂັດແຍ່ງຂອງພວກກ່ຽວ ນີ້ເປັນການຮັບປະກັນ ແລະ ປົກປ້ອງສິດ ຂອງເຂົາເຈົ້າໂດຍສານ ທີ່ເປັນອົງການຕຸລາການໃນນາມລັດ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງຂຶ້ນໃໝ່ ເພື່ອຢັ້ງຢືນພັນທະຂອງລັດໃນສົ່ງເສີມ, ປົກປ້ອງ ແລະ ການສ້າງເງື່ອນໄຂ ອຳນວຍຄວາມສະດວກໃຫ້ການປະຕິບັດ ສິດ ແລະ ພັນທະ ຂອງພົນລະເມືອງ ໃນສາຍພົວພັນທາງແພ່ງ ແລະ ສາຍພົວພັນອື່ນ ມີປະສິດທິຜົນ
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 7 ຂອງປະມວນກົດໝາຍແພ່ງ ຫວຽດນາມ ປີ 2015.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນ	ສືບຕໍ່ຄົ້ນຄວ້າ.

ມາດຕາ 5 ການນຳໃຊ້ປະມວນກົດໝາຍແພ່ງ ແລະ ກົດໝາຍອື່ນ

ປະມວນກົດໝາຍແພ່ງ ກຳນົດຫຼັກການພື້ນຖານ ໃຫ້ແກ່ບົດບັນຍັດຂອງກົດໝາຍອື່ນ, ທີ່ກ່ຽວຂ້ອງໃນສາຍພົວພັນທາງແພ່ງ.

ຖ້າກົດໝາຍອື່ນທີ່ກ່ຽວຂ້ອງ ຫາກຂັດກັບປະມວນກົດໝາຍສະບັບນີ້ ໃຫ້ນຳໃຊ້ປະມວນກົດໝາຍສະບັບນີ້.

ຖ້າປະມວນກົດໝາຍແພ່ງ ຫາກບໍ່ໄດ້ບັນຍັດບັນຫາສະເພາະໃດໜຶ່ງ ກ່ຽວກັບສາຍພົວພັນທາງແພ່ງ ໃຫ້ນຳໃຊ້ບົດບັນຍັດຂອງກົດໝາຍ ທີ່ກຳນົດກ່ຽວກັບບັນຫາສະເພາະນັ້ນ.

ຈຸດປະສົງ	ເພື່ອກຳນົດລະຫว่ານ ການນຳໃຊ້ປະມວນກົດໝາຍແພ່ງ ແລະ ກົດໝາຍອື່ນ ທີ່ກ່ຽວຂ້ອງ ກັບ ສາຍພົວພັນທາງແພ່ງ ເພື່ອບໍ່ໃຫ້ເກີດຄວາມສັບສົນ ໃນເວລານຳໃຊ້ປະມວນກົດໝາຍແພ່ງ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ ໃນກໍລະນີ ທີ່ມີບັນຫາຄ້າຍຄືກັນ ແລະ ໃນກໍລະນີທີ່ປະມວນກົດໝາຍແພ່ງ ບໍ່ໄດ້ກຳນົດໄວ້;
ຕົວຢ່ານ	1. ໃຫ້ເບິ່ງຕົວຢ່ານ ຕາມມາດຕາ 8 ຂອງບົດອະທິບາຍປະມວນກົດໝາຍແພ່ງ. 2. ກົດໝາຍ **ກ** ກຳນົດວ່າ ຜູ້ທຸກຊື້ເຂົ້າມາກິນ ບໍ່ມີພັນທະຕ້ອງຈ່ານຄ່າເຂົ້ານັ້ນ, ອັນນີ້ເປັນການຂັດກັບປະມວນກົດໝາຍແພ່ງມາດຕາ 406, ສະນັ້ນ ຜູ້ທຸກທີ່ຊື້ເຂົ້າຕ້ອງໄດ້ຈ່ານຄ່າເຂົ້າທີ່ຕົນຊື້ ຕາມທີ່ໄດ້ກຳນົດໄວ້ໃນປະມວນກົດໝາຍແພ່ງ. 3. ປະມວນກົດໝາຍແພ່ງ ບໍ່ໄດ້ກຳນົດກ່ຽວກັບການຂາຍສິດນຳໃຊ້ທີ່ດິນໃຫ້ແກ່ຄົນຕ່ານປະເທດ, ຖ້າຫາກຄົນຕ່ານປະເທດ ມີຈຸດປະສົງ ຊື້ສິດນຳໃຊ້ທີ່ດິນ ກໍໃຫ້ປະຕິບັດຕາມກົດໝາຍວ່າດ້ວຍທີ່ດິນ ແຕ່ການຊື້ສິດດັ່ງກ່ານ ແມ່ນມີກຳນົດ.
ເຫດຜົນໃນການສ້ານໃໝ່	ມາດຕານີ້ສ້ານໃໝ່ ເພື່ອຈຳແນກໃຫ້ເຫັນວ່າ ນອກຈາກ ການໃຊ້ປະມວນກົດໝາຍແພ່ງແລ້ວ ຍັງຕ້ອງໄດ້ໃຊ້ກົດໝາຍອື່ນໆ ທີ່ກ່ຽວຂ້ອງນຳອີກ ແລະ ບົດບັນຍັດຂອງກົດໝາຍທີ່ກ່ຽວຂ້ອງ ໃນເລື່ອງສະເພາະນັ້ນ ຈະເປັນບ່ອນອີງ ໃນການນຳໃຊ້ແກ້ໄຂຂໍ້ຂັດແຍ່ງ
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 5 ວັກ 1 ແລະ ມາດຕາ 4 ວັກ 1 ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2015; ມາດຕາ 5 ວັກ 2 ແລະ ມາດຕາ 4 ວັກ 2, ວັກ 3 ຂອງປະມວນກົດໝາຍແພ່ງ ຫວຽດນາມ ປີ 2015; ມາດຕາ 5 ວັກ 3 ແລະ ມາດຕາ 4 ວັກ 3 ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2015.
ມາດຕາອ້ານອີງ	ມາດຕາ 51, 71 ແລະ 72 ຂອງກົດໝາຍວ່າດ້ວຍທີ່ດິນປັບປຸງ ປີ 2019; ມາດຕາ 150 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ	ສືບຕໍ່ຄົ້ນຄວ້າ.

ມາດຕາ 6 ການນຳໃຊ້ປະເພນີປະຕິບັດ ແລະ ບົດບັນຍັດທີ່ຄ້າຍຄຽງຂອງກົດໝາຍ

ປະເພນີປະຕິບັດ ແມ່ນປະເພນີທີ່ເຄີຍນຳໃຊ້ ໃນສາຍພົວພັນທາງແພ່ງ ເປັນເວລາຍາວນານ ແລະ ເປັນທີ່ຍອມຮັບ ໃນ ເຂດ, ເຜົ່າ, ຊຸມຊົນ ຫຼື ສາຍພົວພັນທາງແພ່ງໃດໜຶ່ງ.

ໃນກໍລະນີທີ່ ປະມວນກົດໝາຍແພ່ງ ຫາກບໍ່ໄດ້ກຳນົດບັນຫາໃດໜຶ່ງ ກ່ຽວກັບສາຍພົວພັນທາງແພ່ງ ແລະ ຜູ້ເຂົ້າຮ່ວມໃນສາຍພົວພັນທາງແພ່ງ ກໍບໍ່ໄດ້ຕົກລົງກ່ຽວກັບບັນຫາດັ່ງກ່ານ ໃຫ້ນຳໃຊ້ປະເພນີປະຕິບັດ ແຕ່ບໍ່ໃຫ້ຂັດກັບລັດຖະທຳມະນູນ ແລະ ກົດໝາຍ.

ບົດບັນຍັດທີ່ຄ້າຍຄຽງຂອງກົດໝາຍ ແມ່ນບົດບັນຍັດຂອງກົດໝາຍ ທີ່ສາມາດນຳໃຊ້ ເພື່ອແກ້ໄຂບັນຫາ ຊຶ່ງປະມວນກົດໝາຍແພ່ງບໍ່ໄດ້ກຳນົດໄວ້.

ບົດບັນຍັດທີ່ຄ້າຍຄຽງຂອງກົດໝາຍ ໃຫ້ນຳໃຊ້ ໃນກໍລະນີທີ່ບໍ່ມີປະເພນີປະຕິບັດ.

ຈຸດປະສົງ	ເພື່ອກຳນົດກ່ຽວກັບ ການນຳໃຊ້ປະເພນີປະຕິບັດ ແລະ ກົດໝາຍທີ່ຄ້າຍຄຽງ ໃນກໍລະນີ ທີ່ບໍ່ມີບົດບັນຍັດ ຫຼື ການກຳນົດໄວ້ໃນປະມວນກົດໝາຍແພ່ງ ກ່ຽວກັບບັນຫາໃດໜຶ່ງ
ຕົວຢ່າງ	1. ການຂາຍຄວາຍ ຕ້ອງໃຫ້ເຊືອກພ້ອມ. 2. ປະເພນີປະຕິບັດໃນການຊື້ຂາຍ ສິນຄ້າ ລະຫວ່າງ ຜູ້ຂາຍ ແລະ ຜູ້ຜະລິດ ໃນສັງຄົມ ຊຶ່ງເປັນທີ່ຍອມຮັບກັນມາດົນ ເຊັ່ນ ຜູ້ຈືນນ້ຳມັນໝູ ເອົານ້ຳມັນໝູໄປຂາຍ ໃຫ້ ຜູ້ຂາຍ ທີ່ຂາຍເຄື່ອງຢູ່ຕະຫຼາດ ແຕ່ບໍ່ໄດ້ເກັບເງິນຄ່ານ້ຳມັນໝູໃນມື້ທີ່ມາຂາຍນັ້ນ ແຕ່ຈະເກັບເງິນຄ່ານ້ຳມັນໝູ ໃນມື້ທີ່ມາສົ່ງນ້ຳມັນໃນຮອບໃໝ່ ນີ້ເປັນປະເພນີປະຕິບັດທີ່ພໍ່ຄ້າ ແມ່ຄ້າ ປະຕິບັດກັນມາຈົນລົ້ງເຄີຍແລ້ວ ແລະ ເມື່ອບໍ່ໄດ້ກຳນົດໄວ້ໃນສັນຍາທີ່ຂຽນໄວ້ ເປັນລາຍລັກອັກສອນກໍຕາມ ກໍຖືວ່າການປະຕິບັດແບບນີ້ ຈົນເປັນປະເພນີທີ່ຍອມຮັບໄດ້ໃນສັງຄົມ. 3. ລວງກວ້າງ ຂອງທາງຮ່ອມ ລະຫວ່າງບ້ານໃກ້ເຮືອນຄຽງ ສ່ວນຫຼາຍຈະບໍ່ມີການກຳນົດ ເປັນປະເພນີໃນສັງຄົມ ຖ້າເກີດຂໍ້ຂັດແຍ່ງແລ້ວ ສານຈະຕ້ອງນຳໃຊ້ກົດໝາຍ ຫຼື ລະບຽບການສະເພາະ ກ່ຽວກັບຜັງເມືອງ ທີ່ເປັນຂໍ້ກຳນົດຄ້າຍຄຽງກັນ ກ່ຽວກັບທາງຮ່ອມນັ້ນ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງໃໝ່ ເພື່ອໃຫ້ຮູ້ວ່າ ຖ້າຫາກບັນຫາໃດ ທີ່ປະມວນກົດໝາຍແພ່ງ ບໍ່ໄດ້ກຳນົດໄວ້ແລ້ວ ຈະສາມາດນຳໃຊ້ອັນໃດ ລະຫວ່າງ ປະເພນີປະຕິບັດ ແລະ ກົດໝາຍທີ່ຄ້າຍຄຽງ; ໃນມາດຕານີ້ ໃຫ້ໃຊ້ປະເພນີປະຕິບັດກ່ອນ ເພື່ອແກ້ໄຂບັນຫາ ຖ້າຫາກว่าບໍ່ມີປະເພນີປະຕິບັດໃນເລື່ອງດັ່ງກ່າວແລ້ວ ຫຼື ຄູ່ກໍລະນີ ບໍ່ສາມາດຍອມຮັບປະເພນີນີ້ແລ້ວ ກໍໃຫ້ນຳໃຊ້ກົດໝາຍທີ່ມີຄວາມໝາຍ/ລັກສະນະໃກ້ຄຽງ ກັບ ກໍລະນີທີ່ເກີດຂຶ້ນ
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 5 ແລະ ມາດຕາ 6 ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2015; ມາດຕາ 92 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນ	ສືບຕໍ່ຄົ້ນຄວ້າ.

ມາດຕາ 7 ຂອບເຂດການນຳໃຊ້ປະມວນກົດໝາຍແພ່ງ

ປະມວນກົດໝາຍສະບັບນີ້ ນຳໃຊ້ສຳລັບສາຍພົວພັນທາງແພ່ງ ລະຫວ່າງ ພົນລະເມືອງລາວ, ຄົນຕ່າງປະເທດ, ຄົນຕ່າງດ້າວ ແລະ ຄົນບໍ່ມີສັນຊາດ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ດ້ວຍກັນ ຢູ່ໃນດິນແດນຂອງ ສປປ ລາວ ເວັ້ນເສຍແຕ່ ສົນທິສັນຍາ ຫຼື ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ ຫາກໄດ້ກຳນົດໄວ້ເປັນຢ່າງອື່ນ.

ໃນກໍລະນີ ບົດບັນຍັດໃດໜຶ່ງຂອງປະມວນກົດໝາຍແພ່ງ ຫາກໄດ້ກຳນົດແຕກຕ່າງກັນກັບສົນທິສັນຍາ ຫຼື ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ ໃຫ້ປະຕິບັດຕາມບົດບັນຍັດຂອງສົນທິສັນຍາ ຫຼື ສັນຍາສາກົນ ທີ່ກ່ຽວຂ້ອງນັ້ນ.

ຈຸດປະສົງ	ເພື່ອກຳນົດຂອບເຂດ ການນຳໃຊ້ປະມວນກົດໝາຍແພ່ງໃຫ້ຮູ້ວ່າ ບໍ່ມີສະເພາະແຕ່ພົນລະເມືອງລາວເທົ່ານັ້ນ ປະມວນກົດໝາຍແພ່ງ ຍັງກວມໄປເຖິງຄົນຕ່າງປະເທດ, ຄົນຕ່າງດ້າວ ແລະ ຄົນບໍ່ມີສັນຊາດ ທີ່ອາໄສຢູ່ ສປປ ລາວ ນຳ. ເພື່ອກຳນົດລະຫວ່າງ ບົດບັນຍັດຂອງສົນທິສັນຍາ ຫຼື ສັນຍາສາກົນ ກ່ຽວຂ້ອງກັບສາຍພົວພັນທາງແພ່ງ ທີ່ ສປປລາວ ເປັນພາຄີ ແລະ ປະມວນກົດໝາຍແພ່ງລາວ.
ຕົວຢ່າງ	1. **ກ** ນັກທ່ອງທ່ຽວຕ່າງປະເທດ ໄດ້ຂີ່ລົດໂດຍສານ ບໍລິສັດ **ກຂຄ** ໄປທ່ອງທ່ຽວ ໃນລະຫວ່າງທາງໄດ້ເກີດອຸບປະຕິເຫດ ເຮັດໃຫ້ **ກ** ຂາຫັກ. ໃນກໍລະນີນີ້ **ກ** ສາມາດຮຽກຮ້ອງເອົາຄ່າເສຍຫາຍ ຈາກບໍລິສັດ ລົດໂດຍສານ **ກຂຄ** ນັ້ນໄດ້ ຕາມປະມວນກົດໝາຍແພ່ງ. 2. ສົມມຸດວ່າ ບົດບັນຍັດຂອງປະມວນກົດໝາຍແພ່ງ ກຳນົດວ່າການເຮັດວຽກລ່ວງເວລາຈະບໍ່ໄດ້ຮັບເງິນຄ່າລ່ວງເວລາ, ການກຳນົດຄືແນວນີ້ແຕກຕ່າງ ກັບ ສົນທິສັນຍາ **ຂ** ທີ່ ສປປ ລາວ ເປັນພາຄີ, ໃນກໍລະນີມີຂໍ້ຂັດແຍ່ງ ໃຫ້ປະຕິບັດຕາມບົດບັນຍັດຂອງສົນທິສັນຍາ **ຂ** ນັ້ນ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງຂຶ້ນໃໝ່ ເພື່ອກຳນົດໃຫ້ຮູ້ວ່າ ເຈົ້າກຳຂອງສາຍພົວພັນທາງແພ່ງ ບໍ່ວ່າພົນລະເມືອງລາວ, ຄົນຕ່າງປະເທດ, ຄົນຕ່າງດ້າວ ແລະ ຄົນບໍ່ມີສັນຊາດ, ນິຕິບຸກຄົນ ຫຼື ອົງການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ລ້ວນແຕ່ຢູ່ພາຍໃຕ້ປະມວນກົດໝາຍແພ່ງ. ພ້ອມດຽວກັນນີ້ກໍຮັບຮູ້ ແລະ ປະຕິບັດຕາມບົດບັນຍັດຂອງສົນທິສັນຍາທີ່ກ່ຽວຂ້ອງທາງແພ່ງ ໃນກໍລະນີທີ່ ສປປ ລາວ ເປັນຄູ່ພາຄີຂອງສົນທິສັນຍານັ້ນ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 4 ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2015.
ມາດຕາອ້າງອີງ	ວັກໜຶ່ງ (ສົນທິສັນຍາ ແລະ ບົດບັນຍັດຂອງກົດໝາຍພາຍໃນ) ມາດຕາ 8 ຂອງກົດໝາຍວ່າດ້ວຍສົນທິສັນຍາ ແລະ ກົດໝາຍສາກົນ, ເລກທີ 18/ສພຊ, ລົງວັນທີ 8 ພຶດສະພາ 2017.
ຂໍ້ມູນອື່ນ	**ຂໍ້ສັງເກດ:** ໂດຍພື້ນຖານແລ້ວ ຕາມຫຼັກການກົດໝາຍສາກົນ, ຂໍ້ຂັດແຍ່ງທາງແພ່ງ ລະຫວ່າງພົນລະເມືອງຂອງປະເທດໜຶ່ງ (ແລະ ນິຕິບຸກຄົນ) ກັບ ອີກພົນລະເມືອງ ຂອງປະເທດໜຶ່ງ ຢູ່ປະເທດໃດໜຶ່ງ (ປະເທດທີ່ພົນລະເມືອງຜູ້ນັ້ນອາໄສຢູ່, ຫຼື ຖືສັນຊາດ ຫຼື ປະເທດທີ່ສາມ) ເອີ້ນວ່າ "ກົດໝາຍລະຫວ່າງຊາດພາກບຸກຄົນ ຫຼື ກົດໝາຍລະຫວ່າງຊາດພາກເອກະຊົນ" ຈະຖືກແກ້ໄຂດ້ວຍກົດໝາຍໃດໜຶ່ງຕາມການຕົກລົງ, ຫຼື ກົດໝາຍທີ່ເປັນບ່ອນຢູ່ອາໄສ ຫຼື ກົດໝາຍ ທີ່ຊັບສິນທີ່ເປັນເປົ້າໝາຍຂອງຂໍ້ຂັດແຍ່ງນັ້ນ ຕັ້ງຢູ່. **ຕົວຢ່າງ:** ຄູ່ສັນຍາ ຜູ້ໜຶ່ງ ແມ່ນພົນລະເມືອງ

	ລາວ ອີກຜູ້ໜຶ່ງ ເປັນພົນລະເມືອງສິງກະ�โป, ຊັບສິນ ຕັ້ງຢູ່ສິງກະโป, ຄູ່ກໍລະນີ ເລືອກເອົາກົດໝາຍ ແລະ ການແກ້ໄຂຂໍ້ຂັດແຍ່ງ (ສານ ຫຼື ກຳມະການຕັດສິນ) ຢູ່ສິງກະโป ບ່ອນຊັບຕັ້ງຢູ່ (ນີ້ຍັງລວມໄປເຖິງກົດໝາຍໃນການດຳເນີນຄະດີ) ຊຶ່ງນີ້ໂດຍພື້ນຖານແລ້ວ ຖືເປັນເລື່ອງປົກກະຕິ. ເຖິງຢ່າງໃດກໍຕາມຍ້ອນວ່າ ກົດໝາຍຂອງແຕ່ລະປະເທດ ແລະ ວິທີການ ໃນການແກ້ໄຂຂໍ້ຂັດແຍ່ງບໍ່ຄືກັນ ສະນັ້ນ, ຢູ່ໃນລະດັບສາກົນ ຈຶ່ງມີການຕົກລົງເຫັນດີສ້າງສົນທິສັນຍາສາກົນ ສະເພາະເລື່ອງໃດໜຶ່ງ ເພື່ອເປັນພື້ນຖານ ໃນການແກ້ໄຂຂໍ້ຂັດແຍ່ງ ລະຫວ່າງ ປະເທດຂອງບຸກຄົນ ເຊັ່ນ: (1). ອົງການສາກົນ/ສະຖາບັນ ລະຫວ່າງປະເທດ ສຳລັບຄວາມກົມກຽວກັນລະຫວ່າງ ກົດໝາຍສ່ວນບຸກຄົນ (The International Institute for the Unification of Private Law (UNIDROIT) ແລະ ອົງການເຮັກເພື່ອກົດໝາຍ ລະຫວ່າງຊາດພາກບຸກຄົນ (the Hague Conference on Private International Law) ຊຶ່ງສອງ ອົງການຕົ້ນຕໍເຫຼົ່ານີ້ ໄປສ້າງບັນດາສົນທິສັນຍາຕ່າງໆ ກ່ຽວຂ້ອງກັບສາຍພົວພັນ ທາງແພ່ງລະດັບສາກົນ ເຊັ່ນ: ການແຕ່ງດອງ, ການເອົາເດັກໄປເປັນລູກລ້ຽງ, ການ ຊື້ຂາຍ, ການໃຊ້ແທນຄ່າເສຍຫາຍ, ຂໍ້ຜູກພັນນອກສັນຍາ, ການສົ່ງໝາຍຮຽກ ຂອງສານ ແລະ ອື່ນໆ. ສ ປປ ລາວ ຍັງບໍ່ທັນໄດ້ເຂົ້າເປັນພາຄີຂອງ ບັນດາອົງການ ຈັດຕັ້ງເຫຼົ່ານີ້ເທື່ອ.

ໝວດທີ 2
ຫຼັກການພື້ນຖານຂອງປະມວນກົດໝາຍແພ່ງ

ມາດຕາ 8 ຫຼັກການພື້ນຖານຂອງສາຍພົວພັນທາງແພ່ງ

ຜູ້ເຂົ້າຮ່ວມໃນສາຍພົວພັນທາງແພ່ງ ຕ້ອງປະຕິບັດຕາມຫຼັກການພື້ນຖານ ດັ່ງນີ້:

1. ເຄົາລົບສິດເສລີພາບ ແລະ ມີຄວາມສະໝັກໃຈ;
2. ສະເໝີພາບຕໍ່ໜ້າກົດໝາຍ;
3. ມີເຈດຕະນາດີ ແລະ ບໍລິສຸດໃຈ;
4. ເຄົາລົບ ແລະ ປະຕິບັດກົດໝາຍ;
5. ເຄົາລົບ ແລະ ນັບຖື ອິດຄອງປະເພນີອັນດີງາມຂອງຊາດ;
6. ຮັບຜິດຊອບຕໍ່ຄວາມເສຍຫາຍທາງແພ່ງ.

ຈຸດປະສົງ	ເພື່ອກຳນົດກ່ຽວກັບຫຼັກການ ທີ່ເປັນພື້ນຖານ ສຳລັບການເຄື່ອນໄຫວ ໃນສາຍພົວພັນທາງແພ່ງ ທີ່ຜູ້ເຂົ້າຮ່ວມສາຍພົວພັນທາງແພ່ງ ຕ້ອງເຄົາລົບ ແລະ ປະຕິບັດ.
ຕົວຢ່າງ	ໃຫ້ເບິ່ງຕົວຢ່າງໃນມາດຕາ 9 ເຖິງ ມາດຕາ 14 ຂອງບົດອະທິບາຍປະມວນກົດໝາຍແພ່ງ.
ເຫດຜົນໃນການສ້າງໃໝ່	1. ມາດນີ້ ສ້າງຂຶ້ນໂດຍອີງໃສ່ພື້ນຖານ ມາດຕາ 5 ຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ, ຫຼັກການພື້ນຖານ ທີ່ກຳນົດໄວ້ໃນໝວດທີ IV ສິດ ແລະ ພັນທະພື້ນຖານຂອງພົນລະເມືອງ ທີ່ກຳນົດໄວ້ໃນລັດຖະທຳມະນູນ (ສະບັບປັບປຸງ ປີ 2015), ມາດຕາ 34-51; 2. ຫຼັກການພື້ນຖານ ທີ່ກຳນົດຂຶ້ນນີ້ ເປັນພື້ນຖານ-ບ່ອນອີງ ໃຫ້ແກ່ການນຳໃຊ້ປະມວນກົດໝາຍແພ່ງ ກັບບັນດາກົດໝາຍອື່ນ ທີ່ກຳນົດບັນຫາກ່ຽວກັບສາຍພົວພັນທາງແພ່ງ ທີ່ເປັນອັນສະເພາະ ຕາມມາດຕາ 5 ຂອງປະມວນກົດໝາຍແພ່ງ, ຫຼັກການລວມ ຕາມມາດຕາ 8 ແລະ ມາດຕາ 9 ເຖິງມາດຕາ 14 ເພື່ອເປັນບ່ອນອີງ ໃຫ້ແກ່ການຈຳແນກ ແລະ ວິເຄາະວິໄຈ ການນຳໃຊ້ປະມວນກົດໝາຍແພ່ງ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ. 3. ຫຼັກການ ໃນມາດຕານີ້ ຍັງໄດ້ເພີ່ມຄຳວ່າ "ສິດເສລີພາບ" ແລະ ຫຼັກການ "ເຄົາລົບ ແລະ ປະຕິບັດກົດໝາຍ" ໃນມາດຕານີ້, ສະເໝີເບິ່ງມາດຕາ 9 ແລະ ມາດຕາ 12 ຕື່ມອີກ. 4. ຄຳວ່າ "**ຜູ້ເຂົ້າຮ່ວມໃນສາຍພົວພັນທາງແພ່ງ**" ໝາຍເຖິງ ເຈົ້າກຳ ຂອງສາຍພົວພັນທາງແພ່ງ ຊຶ່ງລວມມີ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ພາຍໃນ ແລະ ຕ່າງປະເທດ ທີ່ສ້າງຕັ້ງຂຶ້ນ ຫຼື ຮັບຮູ້ ຕາມກົດໝາຍຂອງສປປ ລາວ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 1 ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2015.
ມາດຕາອ້າງອີງ	ມາດຕາ 9-14 ຂອງປະມວນກົດໝາຍແພ່ງ; ມາດຕາ 17-19 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	1. ມາດຕາ 2 ຂອງປະມວນກົດໝາຍແພ່ງກຳປູເຈຍ ກຳນົດຫຼັກການ ທີ່ຄ້າຍຄືກັນເຊັ່ນ: ຫຼັກການພື້ນຖານ ທີ່ກວມເອົາຫຼັກການກຽດສັກສີຂອງມະນຸດ, ຫຼັກການຄວາມສະເໝີພາບທາງເພດ ແລະ ການຮັບປະກັນກຳມະສິດ ຕາມທີກຳນົດໄວ້ໃນລັດຖະທຳມະນູນ; ຫຼັກການຄວາມສະເໝີພາບ ຕໍ່ໜ້າກົດໝາຍ; ມາດຕາ 3 ຂອງປະມວນກົດໝາຍແພ່ງກຳປູເຈຍ ລວມທັງເສລີພາບຕ່າງໆ ຂອງບຸກຄົນ ແລະ ນິຕິບຸກຄົນ; ຫຼັກການຫ້າມລະເມີດສິດຂອງບຸກຄົນ; ມາດຕາ 4 ແລະ ມາດຕາ 5 ຂອງປະມວນກົດໝາຍແພ່ງກຳປູເຈຍ ກຳນົດກ່ຽວກັບຫຼັກການເຈດຕະນາດີ. 2. ມາດຕາ 7 ແລະ 8 ຂອງປະມວນກົດໝາຍແພ່ງຝຣັ່ງ ກຳນົດໄວ້ໃນເຫຼັ້ມ 1 ກ່ຽວກັບສິດທິຂອງພົນລະເມືອງ ໂດຍສະເພາະໃນພາກທີ I

	ໂດຍສະເພາະ ພົນລະເມືອງຝຣັ່ງ ສາມາດນຳໃຊ້ສິດຂອງຕົນໄດ້ໂດຍບໍ່ຂັດກັບລັດຖະທຳມະນູນ; ແລະ ມາດຕາ 9 ກຳນົດວ່າ ທຸກຄົນໄດ້ຮັບການປົກປ້ອງສິດສ່ວນບຸກຄົນ. 3. ມາດຕາ 1 ແລະ 2 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ ກຳນົດໄວ້ໃນ ພາກທີ I ກ່ຽວກັບບົດບັນຍັດທົ່ວໄປ ເຊັ່ນ: ຫຼັກການນຳໃຊ້ສິດສ່ວນບຸກຄົນຕ້ອງບໍ່ລະເມີດຄວາມສະຫງົບຮຽບຮ້ອຍຂອງສັງຄົມ; ການປະຕິບັດສິດ ແລະ ໜ້າທີ່ ຕ້ອງເຮັດຂຶ້ນດ້ວຍເຈດຕະນາດີ; ແລະ ຕ້ອງບໍ່ມີການລະເມີດສິດຂອງບຸກຄົນ (ມາດຕາ1); ຫຼັກການຮັບປະກັນ ສິດສະເໝີພາບຍິງຊາຍ ແລະ ເຄົາລົບກຽດສັກສີຂອງມະນຸດ (ມາດຕາ 2); 4. ປະມວນກົດໝາຍແພ່ງຫວຽດນາມ ກຳນົດຫຼັກການທີ່ຄ້າຍຄືກັນ ໃນໝວດ ທີ II ຂອງພາກ I ເຊັ່ນ: ຫຼັກການສິດເສລີພາບ ແລະ ຄວາມສະໝັກໃຈໃນການເຮັດສັນຍາ (ມາດຕາ 4); ຫຼັກການຄວາມສະເໝີພາບຕໍ່ໜ້າກົດໝາຍ (ມາດຕາ 5); ຫຼັກການເຈດຕະນາດີ ແລະ ບໍລິສຸດໃຈ (ມາດຕາ 6); ຫຼັກການຄວາມຜິດຊອບທາງແພ່ງ (ມາດຕາ 7); ຫຼັກການເຄົາລົບສິນທຳ ແລະ ປະເພນີອັນດີງາມ (ມາດຕາ 8); ຫຼັກການເຄົາລົບ ແລະ ປົກປ້ອງສິດທິ ຂອງ ພົນລະເມືອງ (ມາດຕາ 9); ຫຼັກການປົກປ້ອງສິດຜົນປະໂຫຍດອັນຊອບທຳຂອງລັດ, ສັງຄົມ ແລະ ບຸກຄົນ (ມາດຕາ 10); ຫຼັກການປະຕິບັດຕາມກົດໝາຍ (ມາດຕາ 11); ຫຼັກການປະນີປະນອມ (ມາດຕາ 12); ແລະ ຫຼັກການພື້ນຖານໃນການສ້າງສິດ ແລະ ພັນທະທາງແພ່ງ (ມາດຕາ 13).

ມາດຕາ 9 ການເຄົາລົບສິດເສລີພາບ ແລະ ຄວາມສະໝັກໃຈ

ຜູ້ເຂົ້າຮ່ວມໃນສາຍພົວພັນທາງແພ່ງ ມີສິດເສລີພາບ ໃນການກະທຳສິ່ງໃດສິ່ງໜຶ່ງ ດ້ວຍຄວາມສະໝັກໃຈ ເພື່ອສ້າງສິດ ແລະ ພັນທະໃຫ້ຕົນເອງ ບົນພື້ນຖານຄວາມຖືກຕ້ອງ ແລະ ສອດຄ່ອງກັບກົດໝາຍ, ລະບຽບການ ແລະ ຮີດຄອງປະເພນີອັນດີງາມຂອງຊາດ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນຄວາມໝາຍ ແລະ ຄວາມສຳຄັນ ແລະ ຮັບຮູ້ສິດເສລີພາບຂອງບຸກຄົນ ແລະ ການຈັດຕັ້ງ ໃນການກະທຳສິ່ງໃດສິ່ງໜຶ່ງ ທີ່ພາໃຫ້ເກີດສິດ ແລະ ພັນທະໃຫ້ແກ່ຕົນ, ລວມທັງຫຼັກໃນການເຮັດສັນຍາ; ແຕ່ການຕົກລົງ ສິດ ແລະ ພັນທະນັ້ນ ຕ້ອງສອດຄ່ອງ ກັບ ກົດໝາຍ ແລະ ຕາມຮີດຄອງປະເພນີ ອັນດີງາມຂອງຊາດ ຕາມມາດຕາ 12 ແລະ 13 ຂອງປະມວນກົດໝາຍແພ່ງ.
ຕົວຢ່າງ	**ກ** ຈ້າງຄະນະສິລະປະມາສະແດງໃນງານກອງບວດ ຢູ່ບ້ານຕົນເອງ; ການສະແດງຂອງຄະນະສິລະປະໃນມື້ນັ້ນ ມີການຮ້ອງເພງ, ມີການເຕັ້ນ, ຄະນະສິລະປະໃນມື້ນັ້ນ ໄດ້ນຸ່ງຖືຢ່າງຈົບງາມ ມີຄວາມເໝາະສົມ, ບົດເພງ ແລະ ບົດຟ້ອນ ກໍ່ສ່ອງແສງເຖິງວັດທະນະທຳ ແລະ ຮີດຄອງ ອັນດີງາມຂອງຊາດ.

ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງຂຶ້ນໃໝ່ ໂດຍຜັນຂະຫຍາຍຫຼັກການພື້ນຖານ ກ່ຽວກັບການ ຮັບຮູ້ ແລະ ປົກປ້ອງສິດທິມະນຸດ ຂັ້ນພື້ນຖານ ລວມທັງສິດສະເໝີພາບ ຕໍ່ໜ້າກົດໝາຍ ຕາມທີ່ກຳນົດໄວ້ ໃນລັດຖະທຳມະນູນ (ມາດຕາ 34 ແລະ 35); ນອກຈາກນີ້ ຍັງອີງໃສ່ຫຼັກການສາກົນ ໃນການຮັບຮູ ແລະ ສິດທິມະນຸດ ໃນກົດໝາຍຂອງ ສປປ ລາວ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 90 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ; ມາດຕາ 3 ວັກ 2 ຂອງ ປະມວນກົດໝາຍແພ່ງຫວຽດນາມ ປີ 2015.
ມາດຕາອ້າງອີງ	ໝວດທີ 3 ນິຕິກຳທາງແພ່ງ ພາກທີ I ຂອງປະມວນກົດໝາຍແພ່ງ; ມາດຕາ 141 ກ່ຽວກັບເສລີພາບໃນການແຕ່ງດອງ; ມາດຕາ 363 ແລະ 337 ຄວາມສະໝັກໃຈຂອງຄູ່ສັນຍາ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 10 ຄວາມສະເໝີພາບຕໍ່ໜ້າກົດໝາຍ

ຜູ້ເຂົ້າຮ່ວມໃນສາຍພົວພັນທາງແພ່ງ ລ້ວນແຕ່ມີຄວາມສະເໝີພາບຕໍ່ໜ້າກົດໝາຍ ໂດຍບໍ່ຈຳແນກ ຍິງ ແລະ ຊາຍ, ອາຍຸ, ອາຊີບ, ຖານະທາງດ້ານເສດຖະກິດ, ສັງຄົມ, ລະດັບການສຶກສາ, ຄວາມເຊື່ອຖື, ສາສະໜາ ແລະ ຊົນເຜົ່າ.

ຈຸດປະສົງ	ເພື່ອຮັບຮູ້ ແລະ ເຄົາລົບ ສິດສະເໝີພາບ ຕໍ່ໜ້າກົດໝາຍ ຕາມທີ່ກຳນົດໄວ້ ໃນລັດຖະທຳມະນູນ ຂອງ ສປປ ລາວ.
ຕົວຢ່າງ	ບໍລິສັດ **ກ** ປະກາດ ໃຫ້ຜູ້ທີ່ສົນໃຈເຮັດວຽກໃນຕຳແໜ່ງນາຍບັນຊີ ຂອງບໍລິສັດ ແຕ່ບໍລິສັດສະເໜີວ່າ ຖ້າເປັນເພດຍິງ ຈະພິຈາລະນາກ່ອນໝູ່ ຊຶ່ງເຫັນວ່າເປັນການຈຳແນກ ຍິງ-ຊາຍ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງຂຶ້ນໃໝ່ ເພື່ອເປັນການຢັ້ງຢືນ ແລະ ຜັນຂະຫຍາຍ ສິດສະເໝີພາບ ຕໍ່ໜ້າກົດໝາຍຂອງພົນລະເມືອງ ຕາມລັດຖະທຳມະນູນ ເຂົ້າໃນປະມວນກົດໝາຍແພ່ງ ຊຶ່ງເປັນຫຼັກການພື້ນຖານ ໃຫ້ແກ່ສາຍພົວພັນທາງແພ່ງ ໂດຍບໍ່ໃຫ້ມີການຈຳແນກ ເພດ, ເຜົ່າ, ອາຊີບ, ຖານະທາງສັງຄົມ, ທາງເສດຖະກິດ ແລະ ລະດັບການສຶກສາອື່ນໆ. ເຖິງຢ່າງໃດກໍຕາມ, ຫຼັກການຄວາມສະເໝີພາບຕໍ່ໜ້າກົດໝາຍ ໃນສາຍພົວພັນທາງແພ່ງນີ້ ມີລັກສະນະພິເສດແຕກຕ່າງກັນ ເນື້ອໃນຂອງສາຍພົວພັນທາງແພ່ງ ຊຶ່ງປະຕິບັດຕາມນະໂຍບາຍປົກປ້ອງ ແມ່ຍິງ ແລະ ເດັກ, ແລະ ນະໂຍບາຍ ສົ່ງເສີມບັນດາເຜົ່າຂອງ ພັກ-ລັດ ເຊັ່ນ: ໂດຍທົ່ວໄປແລ້ວ ຖ້າຜົວ ຫຼື ເມຍ ມີສິດ ຂໍຢ່າຮ້າງໄດ້ ເປັນສິດສະເໝີພາບ ແລະ ເທົ່າທຽມກັນ ຂອງ ຜົວ ແລະ ເມຍ ແຕ່ ມາດຕາ 178 ຂອງປະມວນກົດໝາຍແພ່ງ ຫ້າມຜົວ ຂໍຢ່າຮ້າງ ຖ້າຫາກວ່າ ເມຍ ພວມຖືພາ ຫຼື ເດັກ ຍັງບໍ່ທັນຮອດໜຶ່ງປີ (ຍົກເວັ້ນຜູ້ເປັນເມຍ ຫາກຂໍຢ່າຮ້າງ); ຫຼື

	ອີງຕາມກົດໝາຍວ່າດ້ວຍແຮງງານມາດຕາ 72 ທີ່ກຳນົດອາຍຸກະສຽນແຕກຕ່າງກັນ ລະຫວ່າງ ຍິງ-ຊາຍ ຊຶ່ງຜູ້ອອກແຮງງານເພດຊາຍ ມີອາຍຸຄົບ 65 ປີ ຈຶ່ງມີສິດ ຂໍຮັບເງິນອຸດໜູນບຳນານໄດ້ ສ່ວນຜູ້ອອກແຮງງານເພດຍິງ 55 ປີ ກໍມີສິດ ຂໍຮັບເງິນອຸດໜູນບຳນານແລ້ວ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 3 ວັກ 1 ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2015.
ມາດຕາອ້າງອີງ	ມາດຕາ 8 ຂໍ້ 2 ປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ	ສືບຕໍ່ຄົ້ນຄວ້າ.

ມາດຕາ 11 ເຈດຕະນາດີ ແລະ ຄວາມບໍລິສຸດໃຈ

ຜູ້ເຂົ້າຮ່ວມໃນສາຍພົວພັນທາງແພ່ງ ຕ້ອງມີເຈດຕະນາດີ ແລະ ຄວາມບໍລິສຸດໃຈ ໃນການເຮັດ ໃຫ້ສິດ ແລະ ພັນທະ ເກີດຂຶ້ນ, ປ່ຽນແປງ ຫຼື ສິ້ນສຸດ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນວ່າ ສາຍພົວພັນທາງແພ່ງ ເມື່ອມີການນຳໃຊ້ສິດ ເພື່ອເຮັດນິຕິກຳໃດໜຶ່ງ ການນຳໃຊ້ສິດນີ້ ຕ້ອງເຮັດຂຶ້ນບົນພື້ນຖານເຈດຕະນາດີ ແລະ ດ້ວຍຄວາມບໍລິສຸດໃຈ
ຕົວຢ່າງ	1. **ເຈດຕະນາດີ:** **ກ** ເຮັດສັນຍາຊື້ ງົວ ກັບ **ຂ**, ໂດຍມີການວາງເງື່ອນໄຂໄວ້ວ່າ ຖ້າຫາກ **ກ** ມີການຕົວະໃຫ້ **ຂ** ຂາຍງົວໃຫ້ ແລະ ບໍ່ໃຊ້ເງິນຄ່າງົວໃຫ້ **ຂ**, ຈະຮັບຜິດຊອບໃຊ້ແທນຄວາມເສຍຫາຍສາມເທົ່າໃຫ້ **ຂ** ແລະ ຂໍຮັບຜິດຊອບທາງອາຍານຳອີກ; ສ່ວນ **ຂ** ກໍໄດ້ບອກກັບ **ກ** ວ່າ ງົວຂອງຕົນເປັນງົວທີ່ບໍ່ຕິດພະຍາດ ແລະ ເປັນງົວທີ່ແຂງແຮງ ຖ້າວ່າ ໃນຕົວຈິງ **ຂ** ຫາກໄດ້ເອົາງົວທີ່ບໍ່ແຂງແຮງ ຫຼື ປ່ວຍ ຂາຍໃຫ້ **ກ**, ຕົນຈະໃຊ້ແທນຄ່າເສຍຫາຍຕ່າງໆ ທີ່ເກີດຂຶ້ນສອງເທົ່າ. 2. **ຄວາມບໍລິສຸດໃຈ:** ໃຫ້ເບິ່ງໃນຕົວຢ່າງມາດຕາ 237 ຂອງບົດອະທິບາຍ ປະມວນກົດໝາຍແພ່ງ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງຂຶ້ນໃໝ່ ບົນພື້ນຖານມາຈາກ ມາດຕາ 5 ຂໍ້ 3 ຂອງກົດໝາຍວ່າດ້ວຍ ຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ປີ 2008 ຊຶ່ງກຳນົດໃຫ້ ຜູ້ເຂົ້າຮ່ວມສາຍພົວພັນທາງແພ່ງ ຕ້ອງມີຄວາມບໍລິສຸດໃຈ, ຈິງໃຈ ແລະ ມີເຈດຕະນາດີ ຕໍ່ຜູ້ທີ່ເຂົ້າຮ່ວມສາຍພົວພັນທາງແພ່ງ ລວມທັງບຸກຄົນທີ່ສາມ ທີ່ອາດຈະໄດ້ຮັບຜົນກະທົບ ຈາກສາຍພົວພັນທາງແພ່ງນັ້ນ. 1. ຄຳວ່າ "**ເຈດຕະນາດີ**" ມີສອງຄວາມໝາຍລວມກັນ ຄື "**ເຈດຕະນາ**" ແລະ "**ດີ**". ຄຳວ່າ "**ເຈດຕະນາ**" ໝາຍເຖິງ ຄວາມຕັ້ງໃຈ, ຈິງໃຈ, ຄວາມມຸ່ງໝາຍ (ວັດຈະນານຸກົມ ພາສາລາວ, ສະຖາບັນວິທະນະຍາສາດສັງຄົມແຫ່ງຊາດ, 2012, ໜ້າ 231) ຄຳວ່າ "**ດີ**" ໝາຍເຖິງຄວາມດີ ສະນັ້ນ ຄຳ

	ວ່າ "**ເຈດຕະນາດີ**" ໝາຍເຖິງ ຄວາມຕັ້ງໃຈ, ເຈດຈຳນົງ, ຄວາມມຸ່ງໝາຍ ດີ ຫຼື ຈຸດປະສົງດີ ຕໍ່ກັບອີກຝ່າຍ ໃນສາຍພົວພັນທາງແພ່ງ. 2. ຄຳວ່າ "**ບໍລິສຸດໃຈ**" ໝາຍເຖິງ ຜ່ອງໃສ, ສະອາດ, ບໍ່ມີຄວາມຜິດ, ກ້ຽງ ປອດ (ວັດຈະນານຸກົມພາສາລາວ ໂດຍມະຫາສິລາ ວິຣະວົງສ໌, ປີ ພ.ສ. 2549, ໜ້າ 220); ນອກຈາກນີ້ ຍັງໝາຍເຖິງມີນ້ຳຈິງ, ມີໃຈຊື່ຕາມ ຈິງທັງນັ້ນ (ວັດຈະນານຸກົມພາສາລາວ, ສະຖາບັນວິທະຍາສາດສັງຄົມ ແຫ່ງຊາດ, 2012, ໜ້າ 583).
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງ ຂອງປະເທດອື່ນ	ມາດຕາ 3 ວັກ 3 ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2015; ມາດຕາ 1 ວັກ 2 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 8 ຂໍ້ 3 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ	ສືບຕໍ່ຄົ້ນຄວ້າ.

ມາດຕາ 12 ການເຄົາລົບ ແລະ ປະຕິບັດກົດໝາຍ

ຜູ້ເຂົ້າຮ່ວມໃນສາຍພົວພັນທາງແພ່ງ ຕ້ອງຮັບປະກັນ ໃຫ້ທຸກການເຄື່ອນໄຫວຂອງຕົນ ໃນສາຍ ພົວພັນທາງແພ່ງ ຖືກຕ້ອງຕາມກົດໝາຍ ຢ່າງເຂັ້ມງວດ ໂດຍບໍ່ແຕະຕ້ອງ ຜົນປະ�โຫຍດ ຂອງລັດ, ລວມ ໝູ່ ແລະ ສິດ ຜົນປະ�โຫຍດອັນຊອບທຳຂອງບຸກຄົນອື່ນ.

ຈຸດປະສົງ	ເພື່ອກຳນົດກ່ຽວກັບຂອບເຂດ ຂອງສິ່ງທີ່ຄວນຈະເຮັດ ໃນສາຍພົວພັນທາງແພ່ງ ເມື່ອມີການເຂົ້າຮ່ວມສາຍພົວພັນທາງແພ່ງ, ການສ້າງສິດ ແລະ ພັນທະນັ້ນ ຕ້ອງ ສອດຄ່ອງ ກັບ ການອະນຸຍາດຂອງກົດໝາຍ ໂດຍປະສະຈາກການແຕະຕ້ອງສິດ ແລະ ຜົນປະ�โຫຍດຂອງບຸກຄົນອື່ນ.
ຕົວຢ່າງ	1. **ກ** ແລະ **ຂ** ເຮັດສັນຍາ ຊື້ຂາຍໄມ້ຂະຍຸງ ຊຶ່ງ **ຂ** ໄປລັກຕັດມາແຕ່ປ່າ, ການ ກະທຳຂອງ **ກ** ແລະ **ຂ** ເປັນການກະທຳທີ່ຜິດກົດໝາຍ ແລະ ເປັນການ ແຕະຕ້ອງເຖິງຜົນປະ�โຫຍດລວມຂອງຊາດ. 2. **ກ** ແລະ **ຂ** ຕົກລົງກັນຊື້ຂາຍປາຂ່າ ຊຶ່ງເປັນສັດສະຫງວນ ແລະ ຫວງ ຫ້າມ. 3. **ກ** ກໍ່ສ້າງຮົ້ວອ້ອມເຮືອນຕົນເອງ ແຕ່ໄປກວມເອົາທີ່ດິນ ຂອງເຮືອນໃກ້ ຄຽງ.
ເຫດຜົນໃນການສ້າງໃໝ່	ເພື່ອຜັນຂະຫຍາຍຫຼັກການ ການຄຸ້ມຄອງລັດ ຄຸ້ມຄອງສັງຄົມດ້ວຍກົດໝາຍ ຕາມການກຳນົດໄວ້ໃນມາດຕາ 10 ຂອງລັດຖະທຳມະນູນ ປີ 2015 ທີ່ກຳນົດ ວ່າ ອົງການຈັດຕັ້ງພັກ, ລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ ແລະ ພົນລະເມືອງທຸກຄົນ ຕ້ອງເຄົາລົບ ແລະ ປະຕິບັດ ລັດຖະທຳມະນູນ ແລະ ກົດໝາຍຢ່າງເຂັ້ມງວດ ໃນມາດຕານີ້ ໃຫ້ໃຊ້ປະເພນີ ປະຕິບັດກ່ອນ ເພື່ອແກ້ໄຂບັນຫາ ຖ້າຫາກວ່າບໍ່ມີປະເພນີປະຕິບັດໃນເລື່ອງດັ່ງ ກ່າວແລ້ວ ຫຼື ຄູ່ກໍລະນີບໍ່ສາມາດຍອມຮັບປະເພນີນີ້ແລ້ວ ກໍໃຫ້ນຳໃຊ້ກົດໝາຍທີ່ ມີຄວາມໝາຍ/ລັກສະນະໃກ້ຄຽງກັບກໍລະນີທີ່ເກີດຂຶ້ນ.

ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 3 ວັກ 2 ແລະ ມາດຕາ 10 ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2015; ມາດຕາ 91 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 8 ຂໍ້ 4 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ	ສືບຕໍ່ຄົ້ນຄວ້າ.

ມາດຕາ 13 ການເຄົາລົບ ແລະ ນັບຖືຮີດຄອງປະເພນີອັນດີງາມຂອງຊາດ

ຜູ້ເຂົ້າຮ່ວມໃນສາຍພົວພັນທາງແພ່ງ ຕ້ອງນຳໃຊ້ສິດ ແລະ ປະຕິບັດພັນທະຂອງຕົນບົນພື້ນຖານການເຄົາລົບ, ນັບຖືຮີດຄອງປະເພນີອັນດີງາມຂອງຊາດ.

ຈຸດປະສົງ	ເພື່ອຊຸກຍູ້ໃຫ້ຜູ້ເຂົ້າຮ່ວມ ໃນສາຍພົວພັນທາງແພ່ງ ຕ້ອງມີສະຕິເຄົາລົບກົດໝາຍ, ແລະ ຮີດຄອງປະເພນີອັນດີງາມຂອງຊາດ. ເພື່ອໃຫ້ຮູ້ວ່າ ການນຳໃຊ້ສິດ ແລະ ພັນທະຂອງຕົນຕາມກົດໝາຍ ຕ້ອງຢູ່ໃນກອບກົດໝາຍ ແລະ ບໍ່ແຕະຕ້ອງສິດ ຂອງຜູ້ອື່ນ.
ຕົວຢ່າງ	**ກ** ເປັນຊ່າງຖ່າຍຮູບທີ່ເກັ່ງ ແລະ **ຂ** ເປັນແມ່ຍິງງາມ, **ກ** ຈຶ່ງສະເໜີ ໃຫ້ **ຂ** ເປັນນາງແບບ ທີ່ເຫັນຮູບຮ່າງສະລີລະຂອງ **ຂ** ຊຶ່ງອອກໄປໃນທາງອະນາຈານ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງຂຶ້ນໃໝ່ ໂດຍຜັນຂະຫຍາຍຫຼັກການພື້ນຖານກ່ຽວກັບ ສິດ ແລະ ໜ້າທີ່ໆ ກຳນົດໄວ້ໃນລັດຖະທຳມະນູນ (ມາດຕາ 34 ແລະ 37); ເພື່ອກຳນົດໃຫ້ເຫັນກ່ຽວກັບຂອບເຂດ ການນຳໃຊ້ ສິດ ແລະ ໜ້າທີ່ເຫຼົ່ານັ້ນ ຊຶ່ງຕ້ອງ ສອດຄ່ອງ ກັບ ກົດໝາຍ ແລະ ຮີດຄອງປະເພນີອັນດີງາມຂອງຊາດ;
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	1. ປະມວນກົດໝາຍແພ່ງ ຂອງກຳປູເຈຍ ກຳກຳນົດຫຼັກການ ກ່ຽວກັບການບໍ່ລະເມີດສິດຂອງ ບຸກຄົນອື່ນ (ມາດຕາ 4); 2. ປະມວນກົດໝາຍແພ່ງຂອງຝຣັ່ງ ກຳນົດໄວ້ໃນເຫຼັ້ມ 1 ກ່ຽວກັບສິດທິ ຂອງພົນລະເມືອງ ໃນພາກທີ I ໂດຍສະເພາະ ພົນລະເມືອງຝຣັ່ງ ສາມາດ ນຳໃຊ້ສິດຂອງຕົນໄດ້ ໂດຍບໍ່ຂັດກັບລັດຖະທຳມະນູນ (ມາດຕາ 7, ມາດຕາ 8); 3. ປະມວນກົດໝາຍແພ່ງຍີ່ປຸ່ນ ກຳນົດໄວ້ໃນ ພາກທີ I ກ່ຽວກັບບົດບັນຍັດ ທົ່ວໄປ ຫຼັກການກ່ຽວກັບການນຳໃຊ້ສິດຂອງບຸກຄົນ ຕ້ອງບໍ່ລະເມີດ ຄວາມສະຫງົບຮຽບຮ້ອຍຂອງສັງຄົມ, ແລະ ບໍ່ລະເມີດສິດຂອງບຸກຄົນ ອື່ນ (ມາດຕາ 1); 4. ມາດຕາ 4 ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2015.
ມາດຕາອ້າງອີງ	ມາດຕາ 8 ຂໍ້ 5 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ	ສືບຕໍ່ຄົ້ນຄວ້າ.

ມາດຕາ 14 ຄວາມຮັບຜິດຊອບຕໍ່ຄວາມເສຍຫາຍທາງແພ່ງ

ຜູ້ເຂົ້າຮ່ວມໃນສາຍພົວພັນທາງແພ່ງ ຕ້ອງຮັບຜິດຊອບຕໍ່ຄວາມເສຍຫາຍທີ່ເກີດຂຶ້ນຈາກການ

ກະທຳ ຫຼື ການບໍ່ກະທຳ ທີ່ບໍ່ຖືກຕ້ອງ ຂອງຕົນເຊັ່ນໃຊ້ແທນຄ່າເສຍຫາຍ, ປະຕິບັດພັນທະອື່ນທາງແພ່ງ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ວ່າ ຜູ້ເຂົ້າຮ່ວມໃນສາຍພົວພັນທາງແພ່ງ ຕ້ອງຮັບຜິດຊອບຕໍ່ຄວາມເສຍຫາຍທາງແພ່ງ ທີ່ເກີດມາຈາກກະທຳຂອງຕົນເອງ ຫຼື ບໍ່ກະທຳ.
ຕົວຢ່າງ	1. **ກ** ຕົກລົງ ກັບ **ຂ** ຊື້ຂາຍເຂົ້າສານໝຽວລ່ວງໜ້າ ຈຳນວນ 2 ໂຕນ ເມື່ອ ຮອດລະດູເກັບກ່ຽວແລ້ວ **ກ** ບໍ່ມາຊື້ເຂົ້າສານດັ່ງກ່າວ ຕາມການຕົກລົງ ກັນ ເຮັດໃຫ້ **ຂ** ໄດ້ຮັບຄວາມເສຍຫາຍ ຊຶ່ງ **ກ** ຕ້ອງໄດ້ຮັບຜິດຊອບ ຕໍ່ ຄວາມເສຍຫາຍນັ້ນ. 2. **ຂ** ປູກຕົ້ນໝາກພ້າວ ອ້ອມເຮືອນໃກ້ກັບຮົ້ວ ເຂດເຮືອນ ຂອງ **ຄ**. ເມື່ອ ມີພາຍຸລົມແດງ ໝາກພ້າວໄດ້ຫຼົ່ນ ຕົກໃສ່ຫຼັງຄາເຮືອນ ຂອງ **ຄ** ເຮັດໃຫ້ ຫຼັງຄາກະເບື້ອງແຕກ, **ຂ** ຕ້ອງຮັບຜິດຊອບ ຕໍ່ຄວາມເສຍຫາຍ ທີ່ເກີດຂຶ້ນ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງຂຶ້ນໃໝ່ ບົນພື້ນຖານມາດຕາ 5 ວັກ 2 ຂອງກົດໝາຍວ່າດ້ວຍຂໍ້ ຜູກພັນໃນສັນຍາ ແລະ ນອກສັນຍາ ປີ 2008 ເພື່ອໃຫ້ຜູ້ເຂົ້າຮ່ວມສາຍພົວພັນ ທາງແພ່ງ ຮັບຮູ້ພັນທະ ໃນການໃຊ້ແທນຄວາມເສຍຫາຍ ທີ່ເກີດຈາກການກະທຳ ຫຼື ບໍ່ກະທຳ ຂອງຜູ້ເຂົ້າຮ່ວມສາຍພົວພັນທາງແພ່ງ ຫຼື ຄວາມຮັບຜິດຊອບທາງ ແພ່ງອື່ນ ທີ່ຜູ້ເຂົ້າຮ່ວມ ສາຍພົວພັນທາງແພ່ງ ໄດ້ຕົກລົງ ຫຼື ທີ່ກົດໝາຍກຳນົດ.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງ ຂອງປະເທດອື່ນ	ມາດຕາ 13 ຂອງປະມວນກົດໝາຍແພ່ງຂອງຫວຽດນາມ ປີ 2005; ມາດຕາ 3 ວັກ 5 ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2015.
ມາດຕາອ້າງອີງ	ມາດຕາ 8 ຂໍ້ 6 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ	ສືບຕໍ່ຄົ້ນຄວ້າ.

ໝວດທີ 3
ນິຕິກຳ

ມາດຕາ 15 ນິຕິກຳ

ນິຕິກຳ ແມ່ນການກະທຳ ທີ່ເກີດຈາກການສະແດງເຈດຈຳນົງຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ດ້ວຍຄວາມສະໝັກໃຈ ຊຶ່ງພາໃຫ້ ສິດ ແລະ ພັນທະທາງແພ່ງ ຂອງຕົນ ເກີດຂຶ້ນ, ປ່ຽນແປງ ຫຼື ສິ້ນສຸດລົງ.

ຈຸດປະສົງ	ເພື່ອກຳນົດຄວາມໝາຍຂອງນິຕິກຳ ແມ່ນການກະທຳ ທີ່ມີຜົນທາງດ້ານກົດໝາຍ ທີ່ເປັນພື້ນຖານໃຫ້ແກ່ການເກີດ, ປ່ຽນແປງ, ສິ້ນສຸດ ສິດ ແລະ ພັນທະທາງ ແພ່ງ.
ຕົວຢ່າງ	**ກ** ຕົກລົງເຫັນດີ ຍົກລົດໄຖນາຂອງຕົນ ໃຫ້ **ຂ**, ນີ້ແມ່ນນິຕິກຳທີ່ເປັນສັນຍາ ມອບຊັບ.
ເຫດຜົນໃນການສ້າງໃໝ່	ຄຳສັບ "**ນິຕິກຳ**" (ຫຼື ນິຕິກັມ) ມາຈາກສອງຄວາມໝາຍຄື: (1). ນິຕິ ໝາຍເຖິງ "**ທີ່ຖືກຕ້ອງ ຕາມກົດໝາຍ**" ແລະ (2). **ກຳ** (ກັມ) ໝາຍເຖິງ "**ການກະ ທຳ**" ທີ່ມາຈາກ "**ເຈດຕະນາ**" (ຫຼືເວົ້າອີກຢ່າງໜຶ່ງວ່າ "**ຕັ້ງໃຈເຮັດ**") ຊຶ່ງລວມມີ

	ທັງການກະທຳດ້ວຍທ່າທີ, ທ່າທາງ ແລະ ການກະທົບດ້ວຍຮ່າງກາຍ (ກາຍະກັມມັງ), ຫຼື ວາຈາ-ການເວົ້າວ່າ (ວະຈີກັມມັງ) ຫຼື ຄວາມນຶກຄິດ (ມະ�โນກັມມັງ). ລວມຄວາມແລ້ວ ຄຳວ່າ "**ນິຕິກຳ**" ໝາຍເຖິງການກະທຳທີ່ຖືກກົດໝາຍ ຫຼື ການກະທຳທີ່ມີແນໃສ່ຜູກຜັນທາງກົດໝາຍຕໍ່ຜູ້ກະທຳ". (**ນິຕິກຳ** ແມ່ນການກະທຳ ທີ່ມີຜົນທາງດ້ານກົດໝາຍ) **ນິຕິກຳທາງແພ່ງ** ໝາຍເຖິງການກະທຳທີ່ຖືກຕ້ອງຕາມກົດໝາຍ (ລວມທັງນິຕິກຳໃຕ້ກົດໝາຍ ຫຼື ລະບຽບການທີ່ກ່ຽວຂ້ອງ) ເຈດຕະນາແນ່ໃສ່ພາໃຫ້ ສິດ ແລະ ພັນທະ ເກີດຂຶ້ນ, ປ່ຽນແປງ ແລະ ສິ້ນສຸດລົງ. **ຕົວຢ່າງ:** ການຍົກຊັບໃຫ້ຜູ້ອື່ນ, ການເຮັດພິໄນກຳ, ການຕົກລົງກະທຳສິ່ງໃດສິ່ງໜຶ່ງ (ສັນຍາ). ເຄື່ອງໝາຍ ຫຼື ລັກສະນະທີ່ສຳຄັນ ຂອງ ນິຕິກຳນັ້ນ ຢ່າງໜ້ອຍຕ້ອງປະກອບດ້ວຍ: (1). ການກະທຳທີ່ສະແດງດ້ວຍເຈດຕະນາ; ເຊັ່ນ **ກ** ຕ້ອງການມອບແຫວນຄຳ ເພື່ອໝັ້ນ **ຂ**; (2). ການກະທຳນັ້ນ ຕ້ອງຖືກຕ້ອງ ແລະ ສອດຄ່ອງກັບກົດໝາຍ ເຊັ່ນ **ກ** ຕ້ອງ ການຈ້າງ **ຂ** ໄປຕີ **ຄ** ອັນນີ້ຖືວ່າຜິດກົດໝາຍ; **ກ** ໃຫ້ **ຂ** ທີ່ກຳລັງເມົາເຫຼົ້າ ຈົ້າໂປ້ ໃນສັນຍາມອບລົດ ໃຫ້ **ກ** ບໍ່ສອດຄ່ອງກັບກົດໝາຍ, ສະນັ້ນ, ນິຕິກຳນີ້ເປັນໂມຄະ; (3). ເຈດຕະນານັ້ນຕ້ອງແນໃສ່ໃຫ້ມີຜົນທາງດ້ານກົດໝາຍ (ເກີດມີຜົນທາງດ້ານກົດໝາຍຄື ສິດ ແລະ ພັນທະ ເກີດ, ປ່ຽນແປງ, ແລະ ສິ້ນສຸດ) ເຊັ່ນ **ກ** ຢອກ **ຂ** ວ່າ ຈະໃຫ້ພໍ່ແມ່ໄປສູ່ຂໍມາເປັນເມັຍ ເປັນການຢອກລົມເທົ່ານັ້ນ ບໍ່ໄດ້ຕັ້ງໃຈໃຫ້ເກີດຜົນແທ້; ຫຼື **ກ** ຕ້ອງການຊື້ລົດຈັກ ຈາກ **ຂ**ນີ້ແນໃສ່ໃຫ້ເກີດຜົນທາງດ້ານກົດໝາຍ. ສະນັ້ນ, ມາດຕາ 15 ຂອງປະມວນກົດໝາຍແພ່ງ ຈຶ່ງກຳນົດວ່າ ນິຕິກຳ ແມ່ນການກະທຳ ທີ່ເກີດຈາກການສະແດງເຈດຈຳນົງ ຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ດ້ວຍຄວາມສະໝັກໃຈ ຊຶ່ງພາໃຫ້ ສິດ ແລະ ພັນທະທາງແພ່ງ ຂອງ ຕົນເກີດຂຶ້ນ, ປ່ຽນແປງ ຫຼື ສິ້ນສຸດລົງ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 149 ຂອງປະມວນກົດໝາຍແພ່ງ ແລະ ພານິດ ໄທ; ມາດຕາ 1100 ແລະ 1101 ຂອງປະມວນກົດໝາຍແພ່ງຝຣັ່ງ; ມາດຕາ 116 ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2015.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 16 ປະເພດນິຕິກຳ

ນິຕິກຳ ແບ່ງອອກເປັນ ນິຕິກຳ ຝ່າຍດຽວ, ສອງຝ່າຍ ແລະ ຫຼາຍຝ່າຍ.

ນິຕິກຳ ຝ່າຍດຽວ ແມ່ນການກະທຳ ທີ່ເກີດຈາກການສະແດງເຈດຈຳນົງຝ່າຍດຽວ ເຊັ່ນ ການປິດໜີ້ຂອງເຈົ້າໜີ້, ການເຮັດພິໄນກຳ.

ນິຕິກຳ ສອງຝ່າຍ ແມ່ນການກະທຳ ທີ່ເກີດຈາກການສະແດງເຈດຈຳນົງຂອງສອງຝ່າຍ ໂດຍສອດຄ່ອງກັນ ເຊັ່ນ ການຊື້ຂາຍ, ການເຊົ່າ.

ນິຕິກຳຫຼາຍຝ່າຍ ແມ່ນການກະທຳ ທີ່ເກີດຈາກການສະແດງເຈດຈຳນົງຂອງຫຼາຍຝ່າຍ ເຊັ່ນ

ການຮຸ້ນສ່ວນ, ການສ້າງຕັ້ງສະມາຄົມ.

ຈຸດປະສົງ	ເພື່ອກຳນົດປະເພດ ຂອງນິຕິກຳ ແລະ ເນື້ອໃນ ຂອງນິຕິກຳ ແຕ່ລະປະເພດ
ຕົວຢ່າງ	1. **ກ** ເຮັດໜັງສືແຈ້ງບໍ່ເອົາໜີ້ສິນ ຫຼື ຄ່າເສຍຫາຍ ນຳ **ຂ**. ນີ້ເປັນການ ສະແດງເຈດຈຳນົງຝ່າຍດຽວ ຂອງ **ກ** ທີ່ພາໃຫ້ສິດ ແລະ ພັນທະ ຂອງ **ກ** ສິ້ນສຸດລົງ ແຕ່ພຽງຝ່າຍດຽວ. ແລະ ນິຕິກຳນີ້ ມີຜົນເຮັດໃຫ້ ພັນທະ ຂອງ **ຂ** ສິ້ນສຸດລົງ ເຊັ່ນດຽວກັນ. 2. **ກ** ສະເໜີໃຫ້ **ຂ** ເຊົ່າລົດຕູ້ຂອງຕົນ ແລະ **ຂ** ກໍຕົກລົງເຫັນດີ ເຊົ່າລົດຈາກ **ກ** ນີ້ແມ່ນນິຕິກຳ ສອງຝ່າຍ. 3. **ກ**, **ຂ**, **ຄ** ແລະ ບໍລິສັດ **ງ** ຕົກລົງ ສ້າງຕັ້ງບໍລິສັດຮ່ວມກັນ ເພື່ອດຳເນີນ ທຸລະກິດ ຜະລິດຜ້າປົດດັງປົດປາກ ນີ້ແມ່ນການສະແດງເຈດຈຳນົງ ຂອງ ຫຼາຍຝ່າຍ ໂດຍເອົາຊັບມາຮ່ວມກັນ/ລົງທຶນຮ່ວມກັນ ເພື່ອເປົ້າໝາຍດຽວ ກັນຄືຜະລິດ ແລະ ສ້າງກຳໄລ ຈາກການຈຳໜ່າຍຜ້າປົດດັງປົດປາກ; ນີ້ ເປັນນິຕິກຳ ທີ່ຫຼາຍຝ່າຍເຂົ້າຮ່ວມ. 4. ບັນດາຜູ້ຂັບລົດຕຸກໆ ໄດ້ຕົກລົງສ້າງຕັ້ງສະມາຄົມລົດຕຸກໆ ນີ້ແມ່ນນິຕິກຳ ຫຼາຍຝ່າຍເຂົ້າຮ່ວມ ເພື່ອຈຸດປະສົງດຽວກັນ ໃນການສ້າງຕັ້ງສະມາຄົມເພື່ອ ປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ຂັບລົດຕຸກໆ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 9 ລັກສະນະຂອງສັນຍາ ຂອງກົດໝາຍວ່າ ດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ປີ 2008 ຊຶ່ງໄດ້ມີການປັບປຸງ ໃຫ້ ສອດຄ່ອງ ຕາມຫຼັກການກ່ຽວຂ້ອງ ກັບ ນິຕິກຳ ແລະ ກຳນົດໃຫ້ຊັດເຈນກວ່າເກົ່າ ໂດຍເພີ່ມຕົວຢ່າງ ຂອງແຕ່ລະປະເພດນິຕິກຳ ເຂົ້າໃສ່ເພື່ອໃຫ້ຜູ້ອ່ານ ໄດ້ເຂົ້າໃຈ ເນື້ອໃນຂອງກົດໝາຍ.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງ ຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 15, 364, 384, 467 ແລະ 590 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 17 ເງື່ອນໄຂຂອງນິຕິກຳ

ນິຕິກຳ ທີ່ເຮັດຂຶ້ນ ຕ້ອງມີເງື່ອນໄຂຄົບຖ້ວນ ດັ່ງນີ້:

1. ວັດຖຸປະສົງ;
2. ຄວາມສະໝັກໃຈ;
3. ຄວາມສາມາດທາງດ້ານການປະພຶດ;
4. ຮູບການ.

ຈຸດປະສົງ	ເພື່ອກຳນົດເງື່ອນໄຂ ທີ່ພາໃຫ້ນິຕິກຳມີຜົນສັກສິດ ຖ້າບໍ່ຄົບຕາມເງື່ອນໄຂນີ້ ຖືວ່າ ນິຕິກຳເປັນໂມຄະ ຕາມມາດຕາ 22 ຂອງປະມວນກົດໝາຍແພ່ງ.
ຕົວຢ່າງ	ເບິ່ງຕົວຢ່າງ ມາດຕາ 18 ເຖິງມາດຕາ 21 ຂອງບົດອະທິບາຍປະມວນກົດໝາຍ ແພ່ງ ຕາມລຳດັບ.

ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 10 ເງື່ອນໄຂສັນຍາ ຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ປີ 2008 ໄດ້ປັບປຸງເງື່ອນໄຂ ຂອງການເຮັດສັນຍາ ມາເປັນເງື່ອນໄຂການເຮັດນິຕິກຳ. ເງື່ອນໄຂຂອງນິຕິກຳ ເປັນພື້ນຖານໃຫ້ນິຕິກຳມີຄວາມສົມບູນ ຖ້າຫາກຂາດເງື່ອນໄຂໃດໜຶ່ງ ຈະເຮັດໃຫ້ນິຕິກຳບໍ່ສົມບູນ ແລະ ພາໃຫ້ເປັນໂມຄະ ຕາມທີ່ກຳນົດໄວ້ໃນມາດຕາ 22 ຂອງປະມວນກົດໝາຍແພ່ງ. ສະເພາະເງື່ອນໄຂຂອງສັນຍາ, ນອກຈາກ 4 ເງື່ອນໄຂນີ້ແລ້ວ ຍັງມີອີກເງື່ອນໄຂ ຄື “**ເຫດຜົນ ທີ່ຖືກຕ້ອງຕາມກົດໝາຍ**” ຕາມທີ່ກຳນົດໄວ້ ໃນມາດຕາ 368 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 18 ແລະ 24 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ	ສືບຕໍ່ຄົ້ນຄວ້າ.

ມາດຕາ 18 ວັດຖຸປະສົງ

ວັດຖຸປະສົງຂອງນິຕິກຳ ແມ່ນເປົ້າໝາຍທີ່ຜູ້ເຮັດນິຕິກຳ ຕ້ອງການໃຫ້ມີຂຶ້ນ.

ເປົ້າໝາຍຂອງນິຕິກຳ ຕ້ອງໃຫ້ຊັດເຈນ, ມີຈິງ, ຖືກຕ້ອງຕາມກົດໝາຍ ຫຼື ບໍ່ຂັດກັບຄວາມເປັນລະບຽບ ຮຽບຮ້ອຍຂອງສັງຄົມ ແລະ ສາມາດປະຕິບັດໄດ້.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນຄວາມໝາຍ ຂອງວັດຖຸປະສົງ ຂອງນິຕິກຳ ຊຶ່ງເປັນເງື່ອນໄຂໜຶ່ງທີ່ພາໃຫ້ນິຕິກຳມີຜົນ.
ຕົວຢ່າງ	1. **ກ** ເຮັດສັນຍາຊື້ຂາຍຄວາຍ ກັບ **ຂ** ວັດຖຸປະສົງຂອງ **ກ** (ຜູ້ຊື້) ຕ້ອງການຄວາຍ ແລະ ວັດຖຸປະສົງຂອງ **ຂ** (ຜູ້ຂາຍ) ຕ້ອງການເງິນ. 2. ຄວາຍຕົວດັ່ງກ່າວ ແມ່ນໂຕເຖິກສີດຳ ອາຍຸ 3 ປີ ແລະ ເປັນກຳມະສິດຂອງ **ຂ** ແທ້ ໂດຍບໍ່ແມ່ນຄວາຍທີ່ລັກມາ, ສ່ວນ **ກ** ຕ້ອງມີເງິນເພື່ອຈ່າຍຄ່າຄວາຍ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 13 ວັດຖຸປະສົງຂອງສັນຍາ ວັກ 1 ແລະ ວັກ 2 ຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ປີ 2008. ຄຳວ່າ: “**ເປົ້າໝາຍຂອງນິຕິກຳ**” ໝາຍເຖິງ ວັດຖຸກຳທີ່ຜູ້ເຂົ້າຮ່ວມໃນສາຍພົວພັນທາງແພ່ງ ຕ້ອງການໃຫ້ມີຂຶ້ນ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 3 ວັກ 3 ຂອງປະມວນກົດໝາຍແພ່ງຫວຽດນາມປີ 2015; ມາດຕາ 1 ວັກ 2 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນ	ສືບຕໍ່ຄົ້ນຄວ້າ.

ມາດຕາ 19 ຄວາມສະໝັກໃຈ

ຄວາມສະໝັກໃຈຂອງຜູ້ເຮັດນິຕິກຳ ແມ່ນຄວາມພໍໃຈໃນການເຮັດນິຕິກຳ ໂດຍປາສະຈາກການຫຼົງຜິດ, ການຕົວະຍົວະຫຼອກລວງ, ການບັງຄັບນາບຂູ່ ຫຼື ການໃຊ້ຄວາມຮຸນແຮງ ຫຼື ຄວາມອັບປະໂຫຍດຂອງຝ່າຍໃດໜຶ່ງ.

ການຫຼົງຜິດ ແມ່ນການເຮັດນິຕິກຳ ໂດຍບໍ່ສອດຄ່ອງກັບເຈດຈຳນົງທີ່ແທ້ຈິງ ຂອງຜູ້ເຮັດນິຕິກຳ.

ການຕົວະຍົວະຫຼອກລວງ ແມ່ນການທີ່ບຸກຄົນໜຶ່ງ ໃຊ້ກົນອຸບາຍໃດໜຶ່ງ ຫຼື ວິທີການອື່ນ ພາໃຫ້ອີກບຸກຄົນໜຶ່ງ ຫຼົງເຊື່ອເຮັດນິຕິກຳ.

ການບັງຄັບນາບຂູ່ ຫຼື ການໃຊ້ຄວາມຮຸນແຮງ ແມ່ນການທີ່ບຸກຄົນໜຶ່ງ ບັງຄັບນາບຂູ່ ຫຼື ໃຊ້ຄວາມຮຸນແຮງຕໍ່ອີກບຸກຄົນໜຶ່ງ ເພື່ອໃຫ້ເຮັດນິຕິກຳ ຍ້ອນຄວາມຢ້ານກົວຕໍ່ໄພອັນຕະລາຍທີ່ກຳລັງເກີດ ຫຼື ຈະເກີດຂຶ້ນຕໍ່ຕົນ, ຄອບຄົວ, ຍາດພີ່ນ້ອງ ຫຼື ຊັບສົມບັດຂອງຕົນ.

ຈຸດປະສົງ	ເພື່ອອະທິບາຍຄວາມໝາຍ ຂອງຄວາມສະໝັກໃຈ ຂອງການເຮັດນິຕິກຳ ຊຶ່ງເປັນໜຶ່ງໃນເງື່ອນໄຂຂອງການເຮັດນິຕິກຳ ແລະ ກຳນົດຫຼັກການກ່ຽວກັບຄວາມບໍ່ສະໝັກໃຈ ໃນການເຮັດນິຕິກຳ.
ຕົວຢ່າງ	1. **ຄວາມພໍໃຈໃນການເຮັດນິຕິກຳ:** **ກ** ມີຄອມພິວເຕີມູນຄ່າ 9.000.000 ກີບ, ສ່ວນ **ຂ** ມີໂທລະສັບ ທີ່ມີມູນຄ່າ 11.000.000 ກີບ ທັງສອງມີຄວາມພໍໃຈ ຈຶ່ງຕົກລົງແລກປ່ຽນຊັບສິ່ງຂອງນຳກັນ ເຖິງແມ່ນວ່າລາຄາຂອງຊັບມີການຫຼຸດລົ່ນກັນ ແຕ່ທັງສອງກໍເຫັນດີ. ສະນັ້ນ, ຈຶ່ງໄດ້ສ້າງສັນຍາແລກປ່ຽນຄອມພິວເຕີ ກັບ ໂທລະສັບ ແລ້ວລົງລາຍເຊັນ ແລະ ມອບຊັບ ໃຫ້ແກ່ກັນ. 2. **ຄວາມສະໝັກໃຈໃນການເຮັດນິຕິກຳ:** **ກ** ມີດິນຕອນໜຶ່ງ ຕັ້ງຢູ່ໃນເຂດຕົວເມືອງ, **ຂ** ເປັນຜູ້ພັດທະນາອະສັງຫາລິມະຊັບ ຈຶ່ງສະເໜີຕໍ່ **ກ** ວ່າ **ຂ** ຈະເປັນຜູ້ອອກທຶນປຸກສ້າງເຮືອນຫ້ອງແຖວ 4 ຊັ້ນ, 4 ຫ້ອງ ໂດຍ **ຂ** ເປັນຜູ້ອອກທຶນກໍ່ສ້າງທັງໝົດ ແລະ ຈະແບ່ງໃຫ້ **ກ** ພຽງແຕ່ຫ້ອງແຖວດຽວ, ສ່ວນອີກ 3 ຫ້ອງຈະຕົກເປັນ ຂອງ **ຂ**. **ກ** ເຫັນວ່າ ຂໍ້ສະເໜີ ຂອງ **ຂ** ເປັນຂໍ້ສະເໜີທີ່ດີ ເພາະຕົນສາມາດເອົາສອງຊັ້ນຂອງຝາກເຮືອນຕົນໃຫ້ຜູ້ອື່ນເຊົ່າ ແລະ ຕົນກໍອາໄສຢູ່ອີກສອງຊັ້ນເທິງ ຈຶ່ງ ມີຕົກລົງເຫັນດີເຮັດສັນຍາການປຸກສ້າງ ແລະ ແບ່ງປັນສິດນຳໃຊ້ທີດິນດັ່ງກ່າວ. ນີ້ແມ່ນຄວາມສະໝັກໃຈຂອງທັງ **ກ** ແລະ **ຂ**. 3. **ການຫຼົງຜິດ:** **ກ** ຄິດຢາກຊື້ເຂົ້າສານໜຽວ 12 ກິໂລ ແຕ່ຕອນທີ່ສັ່ງຊື້ນັ້ນ ພັດຫຼົງສັ່ງວ່າ ຊື້ເຂົ້າສານຈ້າວ 12 ກິໂລ, ເມື່ອ **ຂ** ຕັກເຂົ້າສານຈ້າວ ແລະ ມັດຄັກແນ່ ໃຫ້ **ກ** ແລ້ວ, ກໍຈຶ່ງຮູ້ວ່າ ຕົນຫຼົງສັ່ງວ່າ ເຂົ້າສານຈ້າວ ທັງທີ່ຕົນຢາກຊື້ເຂົ້າສານໜຽວ. ນີ້ແມ່ນຄວາມຫົງຜິດໃນການສະແດງເຈດຕະນາ ຂອງ

ກ, ສະນັ້ນ ຖືວ່າບໍ່ມີຄວາມສະໝັກໃຈ ເພາະ **ກ** ຫຼົງຜິດໃນເວລາເຮັດສັນຍາ ສະນັ້ນ **ກ** ຈຶ່ງມີສິດຍົກເລີກສັນຍາ ຍ້ອນຄວາມຫຼົງຜິດດັ່ງກ່າວ.

4. **ການຕົວະຍົວະຫຼອກລວງ:**

ກ ຕົວະຂາຍແຫວນຄຳປອມ ໃຫ້ **ຂ** ໂດຍບອກว่าแหวนดั่งกล่าวเป็นแหวนคำแท้ ແລະ ເປັນມໍຣະດົກຕົກທອດມາແຕ່ປູ່ຍ່າຂອງຕົນ ທັງໄດ້ມີການທົດສອບ ຈົນເຮັດໃຫ້ **ຂ** ຫຼົງເຊື່ອວ່າແຫວນດັ່ງກ່າວແມ່ນແຫວນຄຳແທ້, **ຂ** ຈຶ່ງຕົກລົງຊື້ແຫວນນັ້ນ. ຕໍ່ມາ **ຂ** ໄດ້ເອົາແຫວນດັ່ງກ່າວໄປຂາຍຢູ່ຮ້ານຂາຍຄຳ ແຫວນນັ້ນເປັນແຫວນຄຳປອມ ທີ່ແມ່ນແຫວນທອງແດງເຄືອບນ້ຳຄຳ, ກໍລະນີນີ້ ຖືວ່າການເຮັດສັນຍາຊື້ຂາຍແຫວນນັ້ນບໍ່ມີຄວາມສະໝັກໃຈຂອງ **ຂ** ຍ້ອນມີການນຳໃຊ້ວິທີການທີ່ພາໃຫ້ **ຂ** ຫຼົງເຊື່ອ.

5. **ການຕົວະຍົວະຫຼອກລວງ:**

ກ ປະກາດຂາຍລົດມືສອງ ໃຫ້ **ຂ** ໂດຍບອກว่า ລົດຄັນດັ່ງກ່າວ ຍັງແມ່ນລົດໃໝ່ ຢູ່ໃນສະພາບໃຊ້ງານໄດ້ດີ ແຕ່ຕົວຈິງລົດດັ່ງກ່າວມີຄວາມບົກຜ່ອງຢູ່ລະບົບເກຍ, ໃນເວລາທີ່ **ຂ** ຈະຊື້ ກໍໄດ້ຕິດຈັກລອງແລ້ວ ແຕ່ບໍ່ມີບັນຫາອັນໃດ **ຂ** ຈຶ່ງຕົກລົງຊື້ລົດຄັນດັ່ງກ່າວ. ຜ່ານການນຳໃຊ້ ສອງ ສາມວັນ ລົດເປເພ່, **ຂ** ຈຶ່ງເອົາລົດໄປສ້ອມແປງຢູ່ຮ້ານສ້ອມແປງລົດ ຈຶ່ງຮູ້ວ່າ ລົດຄັນນີ້ ລະບົບເກຍມີຄວາມຂັດຂ້ອງ. ກໍລະນີນີ້ **ກ** ປົກປິດຂໍ້ມູນເທັດຈິງຂອງສະພາບຕົວຈິງຂອງລົດ ກໍຖືວ່າເປັນການວິທີການໜຶ່ງ ຂອງຕົວະຍົວະຫຼອກລວງເຊັ່ນດຽວກັນ ແລະ ຖືວ່າເປັນການບໍ່ສະໝັກໃຈ.

6. **ການບັງຄັບນາບຂູ່:**

ກ ບັງຄັບ ໃຫ້ **ຂ** ຂາຍເຮືອນ ແລະ ສິດນຳໃຊ້ທີ່ດິນ ໃຫ້ຕົນ ດ້ວຍການຂົ່ມຂູ່ວ່າ ຖ້າ **ຂ** ບໍ່ຂາຍໃຫ້ ຈະທຳຮ້າຍຮ່າງກາຍລູກຊາຍຂອງ **ຂ**, ເຮັດໃຫ້ **ຂ** ເກີດຄວາມຢ້ານກົວ ຈຶ່ງຍອມຂາຍເຮືອນໃຫ້ **ກ**.

7. **ການບັງຄັບນາບຂູ່:**

ກ ເອີ້ນ **ຂ** ມາຫ້ອງການ ແລ້ວບັງຄັບໃຫ້ເຮັດສັນຍາ ຂາຍລົດ ຂອງ **ຂ** ໃຫ້ຕົນ, ຖ້າບໍ່ຂາຍລົດໃຫ້ **ກ** ຈະບໍ່ໃຫ້ **ຂ** ກັບບ້ານ ຈຶ່ງເຮັດໃຫ້ **ຂ** ເກີດຄວາມຢ້ານກົວ ແລະ ຍອມຂາຍລົດ.

8. **ການບັງຄັບນາບຂູ່:**

ກ ໄດ້ຂົ່ມຂູ່ **ຂ** ໃຫ້ຂາຍສິດນຳໃຊ້ທີ່ດິນໃຫ້ຕົນ ໂດຍ **ກ** ໄດ້ຂົ່ມຂູ່ **ຂ** ວ່າ ຖ້າ **ຂ** ບໍ່ປະຕິບັດຕາມ **ກ** ຈະເອົາເລື່ອງທີ່ **ຂ** ໄປມີຄວາມສຳພັນຊູ້ສາວກັບ **ຄ** ໄປປະຈານໃຫ້ອັບອາຍ, ຍ້ອນຄວາມຢ້ານກົວຕໍ່ຜົນກະທົບຕໍ່ຊື່ສຽງຂອງຕົນ ແລະ ຄອບຄົວ ຍາດພີ່ນ້ອງ, **ຂ** ຈຶ່ງຂາຍໃຫ້ **ກ**. ການຂາຍສິດນຳໃຊ້ທີ່ດິນນີ້ ຖືວ່າເປັນການຊື້ຂາຍດ້ວຍຄວາມບໍ່ສະໝັກໃຈ ຍ້ອນເກີດຈາກການບັງຄັບນາບຂູ່. ແລະ **ຂ** ສາມາດຍົກເລີກສັນຍາໄດ້.

9. **ຄວາມອັບປະໂຫຍດຂອງອີກຝ່າຍໜຶ່ງ:**

ພໍ່ແມ່ ຂອງ **ກ** ໄດ້ສົ່ງລູກເຂົ້າຮຽນໂຮງຮຽນສອນພາສາແຫ່ງໜຶ່ງ ໃນນະຄອນຫຼວງວຽງຈັນຊຶ່ງເປັນໂຮງຮຽນທີ່ມີຊື່ສຽງ, ຄ່າຮຽນພາສາຊັ້ນສູງ ປີໜຶ່ງ ຈຳນວນ 35,000,000 ກີບ ຊຶ່ງສາມາດຈ່າຍເປັນເທື່ອ (4 ເດືອນ) ຫຼື ຈ່າຍໝົດປີກໍໄດ້ ແຕ່ໂຮງຮຽນໄດ້ມີກົດລະບຽບວ່າ ເມື່ອ

	ຈ່ຍເງິນແລ້ວ ເຖິງແມ່ນບໍ່ສາມາດຮຽນໄດ້ຈົບຄົບເທີມ ດ້ວຍສາເຫດໃດກໍຕາມ ໂຮງຮຽນກໍຈະບໍ່ສົ່ງເງິນຄືນ. ພໍ່ແມ່ ຂອງ **ກ** ໄດ້ຈ່ຍກ່ອນ 1 ເທີມ ແຕ່ພາຍຫຼັງທີ່ເຂົ້າຮຽນໄປໄດ້ ສອງອາທິດ **ກ** ບໍ່ມັກຮຽນພາສາ ຈຶ່ງຕັດສິນໃຈບໍ່ຮຽນຕໍ່. ກໍລະນີນີ້ ຖືວ່າ **ກ** ໄດ້ຮັບຄວາມອັບປະໂຫຍດ ທີ່ເກີດຈາກຜົນຂອງການເຮັດສັນຍາດັ່ງກ່າວ ແລະ ຖືວ່າບໍ່ມີຄວາມສະໝັກໃຈ. ເຖິງແມ່ນວ່າ ໂຮງຮຽນອາດຈະໄດ້ຮັບຄວາມເສຍຫາຍຈາກການທີ່ບໍ່ສາມາດດຳເນີນການເອົານັກຮຽນໃໝ່ໄດ້ທັນ ແຕ່ກໍຖືວ່າບໍ່ມີເຫດຜົນພຽງພໍທີ່ໂຮງຮຽນຈະຫັກເອົາຄ່າຮຽນທີ່ໄດ້ຈ່ຍທັງໝົດນັ້ນໄວ້ເລີຍ, ໂຮງຮຽນຄວນສົ່ງຄ່າຮຽນພາຍຫຼັງທີ່ ໄລ່ ລ່ຽງຄວາມເສຍຫາຍຂອງຕົນແລ້ວ. 10. **ຄວາມອັບປະໂຫຍດຂອງອີກຝ່າຍໜຶ່ງ:** **ກ** ໄດ້ໄປຈອງຮ້ານອາຫານ **ຂ** ເພື່ອຈັດງານລ້ຽງ ຈຳນວນ 20 ຄົນ, ແລະ **ກ** ໄດ້ຈ່ຍເງິນຈອງ ໃຫ້ **ຂ** ກ່ອນ ຈຳນວນ 2.000.000 ກີບ ແຕ່ເມື່ອຮອດມື້ງານລ້ຽງບໍ່ໄດ້ຈັດ, **ຂ** ຈະເອົາເງິນໝົດ ຈຳນວນ 2.000.000 ກີບ ບໍ່ໄດ້ ເພາະຕ້ອງໄລ່ລຽງຄວາມເສຍຫາຍວ່າ ງານລ້ຽງບໍ່ໄດ້ຈັດ, ອາຫານໄດ້ກະກຽມແລ້ວກໍ່ຕາມ ແຕ່ຍັງສາມາດເອົາຂາຍໃຫ້ຄົນອື່ນໄດ້ຢູ່ ສະນັ້ນ, ຄວນມີການໄລ່ລຽງຄວາມເສຍຫາຍ ແລະ ສົ່ງຄືນບາງສ່ວນ. 11. **ຄວາມອັບປະໂຫຍດຂອງອີກຝ່າຍໜຶ່ງ:** **ກ** ຕ້ອງການຊື້ລົດໃໝ່ ຢູ່ຮ້ານຂາຍລົດ ຊຶ່ງເປັນຕົວແທນຈຳໜ່າຍລົດທີ **ກ** ຕ້ອງການ. ໃນການສັ່ງຈອງລົດນັ້ນ **ກ** ຕ້ອງໄດ້ຈ່ຍເງິນມັດຈຳ ຈຳນວນ 10,000,000 ກີບ, ຮ້ານຂາຍລົດໄດ້ບອກ **ກ** ວ່າ ຖ້າລົດທີ່ສັ່ງຈອງມາຮອດລາວແລ້ວ **ກ** ຕ້ອງມາຊື້ ແລະ ຖ້າ **ກ** ບໍ່ຊື້ ຮ້ານຂາຍລົດຈະເອົາມັດຈຳເລີຍ ແລະ **ກ** ກໍເຫັນດີນຳ. ກໍລະນີນີ້ ເຖິງແມ່ນວ່າ **ກ** ເຫັນດີນຳຮ້ານຂາຍລົດກໍຕາມ ກໍຍັງຖືວ່າ ບໍ່ສົມເຫດສົມຜົນທີ ຮ້ານຂາຍລົດຈະຍຶດເອົາເງິນມັດຈຳໄວ້ເລີຍ ຖ້າຫາກຄວາມເສຍຫາຍ ທີ່ເກີດຂຶ້ນກັບການນຳລົດເຂົ້າມາຕາມການຈອງນັ້ນ ບໍ່ຫຼາຍ ຫຼື ບໍ່ມີເລີຍ, ອີກດ້ານໜຶ່ງ ລົດທີ່ຈອງມານັ້ນເຖິງບໍ່ໄດ້ຂາຍໃຫ້ **ກ** ກໍຍັງສາມາດຂາຍໃຫ້ຜູ້ອື່ນໄດ້ອີກ. ສະນັ້ນ ກໍລະນີນີ້ ກໍຖືວ່າ **ກ** ໄດ້ຮັບຄວາມອັບປະໂຫຍດ ແລະ ຖືວ່າສັນຍານີ້ ບໍ່ເປັນທຳ ແລະ ຖືວ່າບໍ່ມີຄວາມສະໝັກໃຈຂອງຄູ່ສັນຍາ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ມາດຕາ 11, ແລະ ຫຼັກການທີ່ກຳນົດໃນມາດຕາ 19 ນີ້ ສາມາດນຳໃຊ້ກັບທຸກນິຕິກຳ ບໍ່ພຽງແຕ່ເຮັດສັນຍາເທົ່ານັ້ນ ເຊັ່ນ: ເງື່ອນໄຂຂອງການເຮັດພິໄນກຳ. ນອກຈາກນີ້, ຍັງໄດ້ປັບປຸງຄວາມໝາຍໃຫ້ມີຄວາມຊັດເຈນ ແລະ ຮັດກຸມຂຶ້ນກວ່າເກົ່າເຊັ່ນ ຄວາມໝາຍຂອງຄຳວ່າ "**ການບັງຄັບນາບຂູ່ ຫຼື ການໃຊ້ຄວາມຮຸນແຮງ**" ຊຶ່ງໄດ້ເພີ່ມ ຄວາມຢ້ານກົວຕໍ່ໄພອັນຕະລາຍບໍ່ພຽງແຕ່ຕໍ່ຊີວິດ, ສຸຂະພາບ ຫຼື ຊັບສິນເທົ່ານັ້ນ ຍັງມີ ອິດສະລະພາບ, ຊື່ສຽງ ແລະ ກຽດສັກສີຕື່ມອີກ. ຄຳວ່າ "**ຄວາມພໍໃຈໃນການເຮັດນິຕິກຳ**" ໝາຍເຖິງ ເຈດຕະນາທີ່ຕົກລົງ ຫຼື ເຫັນດີ ເຮັດນິຕິກຳ.

ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 95 ແລະ 96 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ; ມາດຕາ 119-124 ແລະ 138 ວັກ 2 ຂອງປະມວນກົດໝາຍແພ່ງເຢຍລະມັນ; ມາດຕາ 1130-1144 ຂອງປະມວນກົດໝາຍແພ່ງຝຣັ່ງ ປີ 2016.
ມາດຕາອ້າງອີງ	ມາດຕາ 17 ວັກ 1 ຂໍ້ 2, 24 ວັກ 1 ຂໍ້ 1 ແລະ 367 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ	1. ການຕົວຍົວະຫຼອກລວງ ແລະ ການບັງຄັບນາບຂູ່ ຫຼື ໃຊ້ຄວາມຮຸນແຮງ ເປັນພຶດຕິກຳໜຶ່ງ ຂອງການກະທຳຜິດທາງອາຍາ. ນອກຈາກມີຄວາມຮັບຜິດຊອບທາງແພ່ງແລ້ວ ບາງກໍລະນີ ອາດມີຄວາມຮັບຜິດຊອບທາງອາຍານຳຕື່ມອີກ. 2. ຄວາມໝາຍຂອງ "**ສັນຍາບໍ່ເປັນທຳ**" (unfair contract) ມີຄວາມໝາຍທີ່ກວ້າງຂວາງ ເມື່ອສົມທຽບໃສ່ຫຼັກການກົດໝາຍຂອງປະເທດອື່ນໆ ໃນນີ້ລວມມີການສ້າງສັນຍາ ທີ່ເປັນແບບພິມມາດຕະຖານທີ່ ມີໂຕໜັງສືນ້ອຍໆທີ່ອ່ານຍາກ ແລະ ທັງມີການນຳໃຊ້ຄຳສັບທາງການກົດໝາຍສັບສົນ ແລະ ເຂົ້າໃຈຍາກ ພາໃຫ້ອີກຝ່າຍໜຶ່ງ ບໍ່ຢາກອ່ານເນື້ອໃນຂອງສັນຍາມາດຕະຖານທັງໝົດ ແລະ ຍັງອາດບໍ່ເຂົ້າໃຈຈະແຈ້ງ ເຖິງສິດ ແລະ ພັນທະຂອງຕົນໄດ້ດີ; ຕົວຢ່າງຂອງສັນຍາລັກສະນະນີ້ ມີສັນຍາປະກັນໄພ, ສັນຍາກູ້ຢືມເງິນ, ສັນຍາບໍລິການ... ສະນັ້ນ, ຢູ່ຫຼາຍປະເທດ ຈຶ່ງອອກກົດໝາຍໃຫ້ສັນຍາປະເພດນີ້ ຕ້ອງພິມໂຕໜັງສືຂະໜາດໃຫຍ່ ແລະ ມີເນື້ອໃນຊັດເຈນ ຈະແຈ້ງ ແລະ ອື່ນໆ. 3. ໃນຄວາມໝາຍຄຳວ່າ "**ນິຕິກຳບໍ່ເປັນທຳ**" ຍັງໝາຍເຖິງ ຜົນຂອງການເຮັດນິຕິກຳນັ້ນ ບໍ່ເທົ່າທຽມກັນ ເຮັດໃຫ້ຝ່າຍໃດໜຶ່ງອັບປະ�โชຍດ. ດັ່ງໃນຕົວຢ່າງ 9 ຖ້າຫາກວ່າຮ້ານອາຫານ ອ້າງວ່າຮ້ານອາຫານໄດ້ຮັບຄວາມອັບປະโชຍດຈາກ ຍ້ອນສູນເສຍໂອກາດໃນການໄດ້ລູກຄ້າ ແລະ ໄດ້ຫ້າງຫາກະກຽມແລ້ວກໍຕາມ ແຕ່ຄວາມເສຍຫາຍຕົວຈິງ ທີ່ເກີດຂຶ້ນນີ້ ຕ້ອງໄດ້ຮັບການຊົ່ງຊາ ກັບ ການມັດຈຳນັ້ນວ່າ ສົມເຫດສົມຜົນ ສົມຄວນເອົາເງິນມັດຈຳທັງໝົດ ຫຼື ບໍ່.

ມາດຕາ 20 ຄວາມສາມາດທາງດ້ານການປະພຶດ

ຄວາມສາມາດທາງດ້ານການປະພຶດຂອງຜູ້ເຮັດນິຕິກຳ ແມ່ນຄວາມສາມາດໃນການກະທຳ ດ້ວຍຕົນເອງຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ພາໃຫ້ເກີດສິດ ແລະ ພັນທະແກ່ຕົນ.

ຈຸດປະສົງ	ເພື່ອອະທິບາຍຄວາມໝາຍ ຂອງຄວາມສາມາດທາງດ້ານການປະພຶດ ໃນການເຮັດນິຕິກຳ ຊຶ່ງເປັນໜຶ່ງໃນເງື່ອນໄຂຂອງການເຮັດນິຕິກຳ ທີ່ພາໃຫ້ນິຕິກຳມີຜົນສັກສິດ.
ຕົວຢ່າງ	1. **ກ** ອາຍຸ 55 ປີ ແລະ ເປັນຄົນມີສະຕິສຳປະຊັນຍະສົມບູນຄົບຖ້ວນ ແຕ່ເປັນພະຍາດຮ້າຍແຮງ, **ກ** ຮູ້ວ່າຕົນອາດມີຊີວິດທີ່ເຫຼືອບໍ່ດົນ ຈຶ່ງໄດ້ຂຽນພິໄນກຳມອບເງິນ ຈຳນວນ 20.000.000 ກີບ ທີ່ຝາກໄວ້ທະນາຄານໃຫ້ແກ່ **ຂ** ຊຶ່ງເປັນ **ກ** ເອົາມາລ້ຽງແຕ່ນ້ອຍ ຄືກັນກັບລູກຄົງ ຂອງຕົນ. ນີ້ສະແດງໃຫ້ເຫັນວ່າ **ກ** ມີຄວາມສາມາດທາງດ້ານການປະພຶດ ໃນການຂຽນພິໄນກຳ ແລະ ເຮັດໃຫ້ພິໄນກຳນັ້ນ ມີຜົນຕາມກົດໝາຍ.

	2. ບໍລິສັດຈຳກັດ **ກຂຄ**, ເປັນນິຕິບຸກຄົນທີ່ສ້າງຕັ້ງຂຶ້ນຖືກຕ້ອງຕາມກົດໝາຍ ລາວ ໃນປີ 2012, ໂດຍມີ **ກ** ເປັນຜູ້ຕາງໜ້າທີ່ຖືກຕ້ອງຕາມກົດໝາຍ ຕາມມະຕິຕົກລົງຂອງສະພາບໍລິຫານ ແລະ ຮັບຮອງໂດຍກອງປະຊຸມຜູ້ຖືຮຸ້ນຂອງບໍລິສັດ. **ກ** ຈຶ່ງມີສິດເປັນຜູ້ຕາງໜ້າທີ່ມີຄວາມສາມາດທາງດ້ານການປະພຶດ ເຂົ້າຮ່ວມສ້າງ, ປ່ຽນແປງ ແລະ ສິ້ນສຸດນິຕິກຳໃດໜຶ່ງໄດ້. ເບິ່ງຕົວຢ່າງຕາມມາດຕາ 115 ຂອງບົດອະທິບາຍປະມວນກົດໝາຍແພ່ງ ຕື່ມອີກ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 12 ຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ປີ 2008 ແລະ ປັບປຸງໃຫ້ຊັດເຈນຍິ່ງຂຶ້ນ ຊຶ່ງຄວາມສາມາດທາງດ້ານການປະພຶດ ເປັນພື້ນຖານໃນການຕີລາຄາຄວາມສົມບູນ ຂອງນິຕິກຳ ຖ້າຜູ້ເຮັດນິຕິກຳ ບໍ່ມີຄວາມສາມາດທາງດ້ານການປະພຶດ ກໍເຮັດໃຫ້ນິຕິກຳບໍ່ມີຄວາມສົມບູນ ນິຕິກຳນັ້ນອາດເປັນໂມຄະໄດ້. ຄຳວ່າ "**ຄວາມສາມາດທາງດ້ານການປະພຶດ**" ແລະ ຫຼັກການທີ່ກ່ຽວຂ້ອງກັບຄວາມສາມາດທາງດ້ານການປະພຶດ ເບິ່ງມາດຕາ 67 ແລະ ໝວດນ້ອຍ **ຄ** ຄວາມສາມາດທາງດ້ານການປະພຶດ ນັບແຕ່ມາດຕາ 67-84 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 17 ຂໍ້ 3, ມາດຕາ 24 ວັກ 1 ຂໍ້ 2 ຂອງປະມວນກົດໝາຍແພ່ງ
ຂໍ້ມູນອື່ນ	ສືບຕໍ່ຄົ້ນຄວ້າ.

ມາດຕາ 21 ຮູບການ

ນິຕິກຳ ອາດຈະເຮັດຂຶ້ນເປັນລາຍລັກອັກສອນ, ທາງປາກເປົ່າ ຫຼື ດ້ວຍຮູບການອື່ນ ຕາມທີ່ໄດ້ກຳນົດໄວ້ໃນປະມວນກົດໝາຍສະບັບນີ້ ຫຼື ກົດໝາຍອື່ນທີ່ກ່ຽວຂ້ອງ.

ຈຸດປະສົງ	ເພື່ອອະທິບາຍຄວາມໝາຍ ຂອງຮູບການໃນການເຮັດນິຕິກຳ ຊຶ່ງເປັນໜຶ່ງໃນເງື່ອນໄຂ ຂອງການເຮັດນິຕິກຳ ທີ່ພາໃຫ້ນິຕິກຳມີຜົນສັກສິດ.
ຕົວຢ່າງ	**ກ** ເຫັນດີໃຫ້ **ຂ** ກູ້ຢືມເງິນ ຈຳນວນ 50,000,000 ກີບ ຍ້ອນຮັກແພງກັນຈຶ່ງຕົກລົງກັນແບບປາກເປົ່າ ແລະ **ກ** ກຳໂອນເງິນໃຫ້ **ຂ** ຜ່ານການໂອນແບບເອີເລັກโตรนิก. ກໍລະນີນີ້ ເຖິງແມ່ນວ່າປະມວນກົດໝາຍແພ່ງຮັບຮູ້ ນິຕິກຳ ຫຼື ສັນຍາ ປາກເປົ່າກໍຕາມ, ແຕ່ການເຮັດສັນຍາກູ້ຢືມດັ່ງກ່າວ ບໍ່ຖືກຕ້ອງ ກັບ ຮູບການ ຂອງການເຮັດສັນຍາ. ມາດຕາ 430 ວັກ 5 ຂອງປະມວນກົດໝາຍແພ່ງ ທີ່ກຳນົດວ່າ ສັນຍາກູ້ຢືມ ຕ້ອງເຮັດເປັນລາຍລັກອັກສອນ. ນີ້ເປັນຮູບການ ທີ່ກຳນົດໄວ້ໃນກົດໝາຍ ຊຶ່ງຄູ່ສັນຍາຕ້ອງປະຕິບັດໃຫ້ຖືກຕ້ອງສອດຄ່ອງ. ໃນກໍລະນີນີ້ ສັນຍາເປັນໂມຄະເດັດຂາດ ຕາມມາດຕາ 23 ຂໍ້ 4 ຂອງປະມວນກົດໝາຍແພ່ງ ແລະ ອີງຕາມມາດຕາ 28 ວັກໜຶ່ງ ຖືວ່າບໍ່ມີຜົນທາງດ້ານກົດໝາຍ ນັບແຕ່ວັນເຮັດນິຕິກຳ, ແລະ ອີງຕາມມາດຕາ 28 ວັກສາມ ຂອງປະມວນກົດໝາຍແພ່ງ

	ແມ່ນຄູ່ສັນຍາທີ່ເປັນໂມຄະເດັດຂາດ ສຳລັບຊັບ ຫຼື ຜົນປະໂຫຍດທີ່ໄດ້ປະຕິບັດຕໍ່ກັນນັ້ນ ຕ້ອງໄດ້ສົ່ງ (ສົ່ງເງິນຄືນ) ໃຫ້ແກ່ກັນ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 15 ວັກ 1 ຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ປີ 2008 ເພື່ອຮັບຮູ້ ຮູບການຕ່າງໆ ທີ່ເປັນພື້ນຖານໃຫ້ແກ່ຜົນສັກສິດຂອງນິຕິກຳ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 152 ຂອງປະມວນກົດໝາຍແພ່ງ ແລະ ພານິດໄທ; ມາດຕາ 125 ຂອງປະມວນກົດໝາຍແພ່ງເຢຍລະມັນ.
ມາດຕາອ້າງອີງ	ມາດຕາ 17 ຂໍ້ 4, ມາດຕາ 23 ວັກ 1 ຂໍ້ 4 ແລະ ມາດຕາ 28 ຂອງ ປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ	ສືບຕໍ່ຄົ້ນຄວ້າ.

ມາດຕາ 22 ນິຕິກຳເປັນໂມຄະ

ນິຕິກຳ ເປັນໂມຄະແມ່ນນິຕິກຳທີ່ເຮັດຂຶ້ນໂດຍບໍ່ສອດຄ່ອງກັບເງື່ອນໄຂໃດໜຶ່ງຂອງນິຕິກຳ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 17 ຂອງປະມວນກົດໝາຍສະບັບນີ້.

ນິຕິກຳ ອາດເປັນໂມຄະ ເດັດຂາດ ຫຼື ບໍ່ເດັດຂາດ, ໂມຄະທັງໝົດ ຫຼື ບາງສ່ວນ.

ຈຸດປະສົງ	ເພື່ອອະທິບາຍຄວາມໝາຍຂອງນິຕິກຳ ທີ່ເປັນໂມຄະ ຫຼື ໃຊ້ບໍ່ໄດ້ຕາມກົດໝາຍ ຊຶ່ງມີຫຼາຍຮູບການ ຂອງຄວາມເປັນໂມຄະ.
ຕົວຢ່າງ	ເບິ່ງຕາມຕົວຢ່າງ ມາດຕາ 23 ນິຕິກຳເປັນໂມຄະເດັດຂາດ, ມາດຕາ 24 ນິຕິກຳເປັນໂມຄະບໍ່ເດັດຂາດ, ມາດຕາ 25 ນິຕິກຳເປັນໂມຄະທັງໝົດ ຫຼື ບາງສ່ວນ, ຕາມລຳດັບ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 18 ວັກ 1 ຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ປີ 2008 ເພື່ອຮັບຮູ້ຄວາມໝາຍ ແລະ ຮູບການຂອງການເປັນໂມຄະຂອງນິຕິກຳ. ຄຳວ່າ "**ໂມຄະ**" ໝາຍເຖິງເປົ່າ, ຫວ່າງ, ບໍ່ມີປະໂຫຍດ, ບໍ່ມີຜົນ (ວັດຈະນານຸກົມພາສາລາວ, ສະຖາບັນວິທະຍາສາດສັງຄົມແຫ່ງຊາດ, ໜ້າ 779).
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 23-28, ແລະ ມາດຕາ 376 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ	ປຶ້ມຄວາມຮູ້ພື້ນຖານ ກ່ຽວກັບຂໍ້ຜູກພັນໃນສັນຍາ ໂດຍຄະນະຄົ້ນຄວ້າກົດໝາຍແພ່ງໃນໂຄງການພັດທະນາຊັບພະຍາກອນມະນຸດ ໃນຂົງເຂດຍຸຕິທຳ ແຫ່ງ ສປປ ລາວ, ໂດຍການຮ່ວມມື ລະຫວ່າງ ອົງການໄວຍະການປະຊາຊົນ, ສານປະຊາຊົນ, ກະຊວງຍຸຕິທຳ, ຄະນະນິຕິສາດ ແລະ ລັດຖະສາດ ມະຫາວິທະຍາໄລແຫ່ງຊາດ ກັບອົງການໄຈກາ (JICA) ປະເທດຍີ່ປຸ່ນ ປີ 2014, ໜ້າ 19

ມາດຕາ 23 ນິຕິກຳເປັນໂມຄະເດັດຂາດ

ນິຕິກຳເປັນໂມຄະເດັດຂາດ ແມ່ນນິຕິກຳ ທີ່ເຮັດຂຶ້ນໂດຍຂັດກັບ ສິດ ແລະ ຜົນປະ�โຫຍດຂອງ ລັດ ຫຼື ຂອງສັງຄົມ ຊຶ່ງມີດັ່ງນີ້:

1. ນິຕິກຳ ທີ່ເຮັດຂຶ້ນ ໂດຍແຕະຕ້ອງເຖິງຄວາມໝັ້ນຄົງຂອງຊາດ, ຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ;
2. ນິຕິກຳ ທີ່ເຮັດຂຶ້ນໂດຍນິຕິບຸກຄົນ ຊຶ່ງຂັດກັບກົດລະບຽບກ່ຽວກັບການຈັດຕັ້ງ ແລະ ການເຄື່ອນ ໄຫວຂອງຕົນ;
3. ນິຕິກຳ ທີ່ເຮັດຂຶ້ນ ດ້ວຍການເຊື່ອງອຳ;
4. ນິຕິກຳ ທີ່ເຮັດຂຶ້ນ ດ້ວຍການລະເມີດຮູບການຂອງນິຕິກຳ ທີ່ໄດ້ກຳນົດໄວ້ສະເພາະ.

ນິຕິກຳເປັນໂມຄະເດັດຂາດແມ່ນນິຕິກຳ ທີ່ໃຊ້ບໍ່ໄດ້ນັບແຕ່ຕົ້ນມາ ແລະ ເຈົ້າກຳບໍ່ມີສິດຮັບຮອງ ເອົານິຕິກຳດັ່ງກ່າວ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ ຄວາມໝາຍຂອງນິຕິກຳທາງແພ່ງ ທີ່ເປັນໂມຄະເດັດຂາດ ແລະ ເງື່ອນໄຂ ທີ່ພາໃຫ້ເປັນໂມຄະເດັດຂາດ. ພ້ອມກັນນີ້ ໃຫ້ຮູ້ວ່ານິຕິກຳທີ່ເປັນໂມຄະ ເດັດຂາດນັ້ນ ເຈົ້າກຳບໍ່ສາມາດຮັບຮອງເອົາໄດ້ ແລະ ການເປັນໂມຄະນັ້ນ ໃຫ້ນັບ ແຕ່ເວລາເລີ່ມຕົ້ນເຮັດນິຕິກຳເປັນຕົ້ນມາ ເພາະນິຕິກຳທາງແພ່ງດັ່ງກ່າວ ແຕະຕ້ອງ ເຖິງສິດ ແລະ ຜົນປະ�โຫຍດຂອງລັດ ແລະ ສັງຄົມ.
ຕົວຢ່າງ	1. **ນິຕິກຳ ຂັດກັບຄວາມໝັ້ນຄົງຂອງຊາດ, ຄວາມເປັນລະບຽບ ຮຽບຮ້ອຍຕໍ່ສັງຄົມ: ກ** ຜະລິດປືນແກັບ ແລ້ວຂາຍ ໃຫ້ນາຍພານລ່າ ເນື້ອ **ຂ**, ການຜະລິດປືນໂດຍບໍ່ໄດ້ຮັບອະນຸຍາດ ແລະ ການຂາຍອາວຸດ ນອກ ຈາກຜິດກົດໝາຍອາຍາແລ້ວ, ໃນເລື່ອງທາງແພ່ງ ສັນຍາຊື້ຂາຍປືນ ນີ້ເປັນໂມຄະເດັດຂາດ ເພາະເປັນນິຕິກຳທີ່ຂັດຕໍ່ຄວາມໝັ້ນຄົງຂອງຊາດ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ຍ້ອນວ່າ **ຂ** ອາດຈະໃຊ້ປືນນັ້ນ ໄປສ້າງຄວາມບໍ່ສະຫງົບຮຽບຮ້ອຍໃນສັງຄົມໄດ້. 2. **ນິຕິກຳ ຂັດກັບຄວາມໝັ້ນຄົງຂອງຊາດ, ຄວາມເປັນລະບຽບ ຮຽບຮ້ອຍຕໍ່ສັງຄົມ: ກ** ແລະ **ຂ** ຕົກລົງຊື້ຂາຍ ຢາແອມເຟຕາມິນ-ຢາ ບ້າ ຈຳນວນ 1 ລ້ານເມັດ ໂດຍ **ກ** ຕົກລົງເອົາເຮືອນ ແລະ ທີ່ດິນຄ້ຳປະກັນ ການຊື້ຂາຍ ຖ້າ **ກ** ບໍ່ຈ່ຍເງິນຄ່າຢາບ້າ ໃຫ້ **ຂ**, **ກ** ຍຶນດີ ຍົກທີ່ດິນ ແລະ ເຮືອນໃຫ້ **ຂ**. ສັນຍາຊື້ຂາຍຢາບ້ານີ້ເປັນໂມຄະເດັດຂາດ ຍ້ອນວ່າ ເປັນນິຕິ ກຳທີ່ຂັດກັບຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ. 3. **ນິຕິກຳ ທີ່ເຮັດຂຶ້ນໂດຍນິຕິບຸກຄົນ ຊຶ່ງຂັດກັບກົດລະບຽບ ກ່ຽວກັບການຈັດຕັ້ງ ແລະ ການເຄື່ອນ ໄຫວຂອງຕົນ**: ບໍລິສັດ **ກຂຄ**, ມີຜູ້ຖືຮຸ້ນ **ກ** ຖືຮຸ້ນ 51 %, ຜູ້ຖືຮຸ້ນ **ຂ** ຖືຮຸ້ນ 30% ແລະ ຜູ້ຖືຮຸ້ນ **ຄ** ຖືຮຸ້ນ 19%. ອີງຕາມກົດລະບຽບບໍລິສັດ-ເລື່ອງສຳຄັນ ກ່ຽວຂ້ອງກັບການເຄື່ອນໄຫວຂອງບໍລິສັດ ຕ້ອງໄດ້ນຳມາພິຈາລະນາໃນ ກອງປະຊຸມຂອງສະພາບໍລິຫານ ຊຶ່ງມີ **ກ**, **ຂ** ແລະ **ຄ** ເປັນປະທານ, ຮອງ ປະທານ ແລະ ກຳມະການ ຕາມລຳດັບ. **ກ** ໄດ້ຢືມເງິນຈາກ **ງ** ຈຳນວນ 100,000,000 ກີບ ເພື່ອມາຊື້ສິດນຳໃຊ້ທີ່ດິນ ໃນນາມບໍລິສັດ ຊຶ່ງບໍ່ ໄດ້ຜ່ານມະຕິຕົກລົງເຫັນດີຂອງສະພາບໍລິຫານ ແລະ ໃນຕົວຈິງ **ກ** ກໍ ໄດ້ເອົາທີ່ດິນທີ່ຊື້ນັ້ນ ໃຫ້ຜູ້ອື່ນເຊົ່າ ແລະ ເອົາເງິນຄ່າເຊົ່ານັ້ນ ໃຫ້ຕົນເອງ

	ບໍ່ໄດ້ໃຫ້ບໍລິສັດ. ເລື່ອງຜ່ານມາ 2 ປີ, ເມື່ອຮອດກຳນົດໃຊ້ແທນໜີ້ສິນ, **ກ** ບໍ່ສາມາດໃຊ້ແທນຄືນໄດ້, **ຂ** ແລະ **ຄ** ຈຶ່ງຮູ້ເລື່ອງ ຍ້ອນ **ງ** ມາທວງກັບ **ຂ** ແລະ **ຄ**. ນິຕິກຳ-ສັນຍາກູ້ຢືມລະຫວ່າງ **ກ** ແລະ **ງ** ເປັນໂມຄະເດັດຂາດ ເພາະວ່າ ຂັດກັບກົດລະບຽບຂອງບໍລິສັດ ທີ່ກຳນົດວ່າ ບັນຫາໃດສຳຄັນ ຕ້ອງໄດ້ຜ່ານການຕົກລົງເຫັນດີຈາກສະພາບໍລິຫານ. 4. **ນິຕິກຳເຊື່ອງອຳ: ກ** ກູ້ຢືມເງິນຈາກ **ຂ** ແລະ ເຮັດສັນຍາຈຳນອງເຮືອນ ແລະ ທີ່ດິນຂອງຕົນ ຄ້ຳປະກັນການກູ້ຢືມ. ຕໍ່ມາ **ກ** ໄດ້ເຮັດສັນຍາຊື້ຂາຍ ເຮືອນ ແລະ ທີ່ດິນໃຫ້ **ຄ** ຊຶ່ງເປັນການຂາຍທີ່ **ກ** ແລະ **ຄ** ບໍ່ໄດ້ຕ້ອງການ ຂາຍເຮືອນແທ້ ແລະ **ຄ** ກໍບໍ່ຕ້ອງການຊື້ເຮືອນແທ້ ແຕ່ເຮັດຂຶ້ນເພື່ອເຊື່ອງ ອຳຊັບທີ່ເປັນເປົ້າໝາຍຂອງການຈຳນອງ. ເມື່ອ **ກ** ບໍ່ສາມາດໃຊ້ແທນໜີ້ ສິນການກູ້ຢືມໃຫ້ **ຂ**, **ຂ** ຈຶ່ງທວງເອົາເຮືອນ ແລະ ທີ່ດິນທີ່ນຳມາຈຳນອງ, ແຕ່ **ກ** ບອກວ່າ ຂາຍໃຫ້ **ຄ**, **ຂ** ຈຶ່ງໄປທວງ ຈາກ **ຄ**, **ຄ** ອ້າງວ່າ ຕົນໄດ້ ຊື້ມາດ້ວຍຄວາມບໍລິສຸດໃຈ ແລະ ບໍ່ສົ່ງຄືນໃຫ້ **ກ** ຫຼື **ຂ**. ໃນກໍລະນີ້ (ຖ້າ ມີການພິສູດແລ້ວ) ເຫັນວ່ານິຕິກຳລະຫວ່າງ **ກ** ແລະ **ຄ** ເປັນນິຕິກຳເຊື່ອງ ອຳ ຊຶ່ງຖືເປັນໂມຄະ. 5. **ການລະເມີດຮູບການຂອງນິຕິກຳທີ່ໄດ້ກຳນົດໄວ້ສະເພາະ: ກ** ຕົກລົງມອບດິນຕອນໜຶ່ງ ໃຫ້ **ຂ** ແຕ່ການຕົກລົງນີ້ເຮັດຂຶ້ນໃນຮູບການ ປາກເປົ່າ ແລະ ບໍ່ໄດ້ເຮັດເປັນລາຍລັກອັກສອນ. ການມອບຊັບນີ້ ຈຶ່ງ ຖືວ່າເປັນໂມຄະ ຍ້ອນຂັດກັບຮູບການຂອງການເຮັດສັນຍາທີ່ຕ້ອງເຮັດ ເປັນລາຍລັກອັກສອນ ຕາມທີ່ກຳນົດໄວ້ໃນມາດຕາ 421 ຂອງປະມວນ ກົດໝາຍແພ່ງ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 20 ວັກ 1 ແລະ 2 ຂອງກົດໝາຍວ່າດ້ວຍ ຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ປີ 2008 ເພື່ອຮັບຮູ້ຄວາມໝາຍ ແລະ ຮູບການຂອງການເປັນໂມຄະເດັດຂາດ ຂອງນິຕິກຳ ເພື່ອໃຫ້ມີຄວາມຊັດເຈນຂຶ້ນ ກວ່າເກົ່າ. ຄຳວ່າ "**ໂມຄະ**" ໝາຍເຖິງ ເປົ່າ, ຫວ່າງ, ບໍ່ມີປະໂຫຍດ, ບໍ່ມີຜົນ (ວັດຈະນານຸ ກົມພາສາລາວ, ສະຖາບັນວິທະຍາສາດສັງຄົມແຫ່ງຊາດ, ໜ້າ779). "**ນິຕິກຳເຊື່ອງອຳ**" ໝາຍເຖິງ ນິຕິກຳທີ່ເຈົ້າກຳສ້າງຂຶ້ນ ເພື່ອແນໃສ່ບໍ່ໃຫ້ມີຜົນ ຜູກພັນແທ້ຈິງ. ອີງໃສ່ເງື່ອນໄຂຂອງນິຕິກຳ ເປົ້າໝາຍ ແລະ ຈຸດປະສົງ ຂອງນິຕິ ກຳ ບໍ່ມີຂຶ້ນຈິງ ເຖິງວ່າເງື່ອນໄຂອື່ນຈະຖືກຕ້ອງ ແລະ ຄົບຖ້ວນກົດຕາມ. ໂດຍລວມແລ້ວ, ນິຕິກຳທີ່ເປັນໂມຄະເດັດຂາດ ເປັນນິຕິກຳທີ່ຂັດກັບ "**ຜົນປະ ໂຫຍດຂອງຊາດ ແລະ ຄວາມສະຫງົບຂອງສັງຄົມ**" ຊຶ່ງໃນປັດຈຸບັນ ກຳນົດຂຶ້ນມີແຕ່ 4 ກໍລະນີເທົ່ານັ້ນ, ຖ້ານິຕິກຳ ມີຄວາມບົກຜ່ອງ ຫຼື ບໍ່ຄົບຖ້ວນ ຂອງນິຕິກຳ ຕາມເງື່ອນໄຂທີ່ໄດ້ກຳນົດໄວ້ໃນມາດຕາ 17 ຂອງປະມວນກົດໝາຍ ແພ່ງ ທີ່ບໍ່ໄດ້ນອນໃນ 4 ກໍລະນີນີ້ ນິຕິກຳນັ້ນ ອາດເປັນໂມຄະບໍ່ເດັດຂາດ ເຖິງ ແມ່ນວ່າຜູ້ເຮັດນິຕິກຳຈະມີຄວາມສະໝັກໃຈກໍຕາມ ການເຮັດນິຕິກຳນັ້ນຕ້ອງ ບໍ່ຂັດກັບຜົນປະໂຫຍດຂອງຊາດ ແລະ ຄວາມສະຫງົບຂອງສັງຄົມ ຫຼື ຂັດກັບ ກົດໝາຍ.

	ຈຸດແຕກຫ່າງ ລະຫວ່າງ ນິຕິກຳເປັນໂມຄະເດັດຂາດ ແລະ ບໍ່ເດັດຂາດໃນກໍລະນີ ທີ່ນິຕິກຳເປັນໂມຄະເດັດຂາດ ບໍ່ອະນຸຍາດໃຫ້ຄູ່ເຮັດນິຕິກຳ ຮັບຮອງເອົານິຕິກຳ ທີ່ເປັນໂມຄະ ສ່ວນນິຕິກຳທີ່ເປັນໂມຄະບໍ່ເດັດຂາດ ກົດໝາຍອະນຸຍາດໃຫ້ຜູ້ເຮັດນິຕິກຳຮັບຮອງ ເອົານິຕິກຳນັ້ນ (ເບິ່ງມາດຕາ 24 ຂອງປະມວນກົດໝາຍແພ່ງ). ນິຕິກຳ ທີ່ເປັນໂມຄະເດັດຂາດ ໃຊ້ບໍ່ໄດ້ນັບແຕ່ມື້ທີ່ໄດ້ມີການຕົກລົງ ຫຼື ເຮັດນິຕິກຳນັ້ນ. ຄຳວ່າ "**ນິຕິກຳເຊື່ອງອຳ**" ໝາຍເຖິງຜູ້ເຮັດນິຕິກຳ (ທັງສອງຝ່າຍ ຫຼື ຝ່າຍດຽວ) ມີເຈດຈຳນົງ "**ຕົວະ**" ຫຼື "**ຫຼອກລວງ**" ໂດຍຜູ້ເຮັດນິຕິກຳຕ່າງຮູ້ວ່າວັດຖຸປະສົງ ຂອງຜູ້ເຮັດນິຕິກຳ ແມ່ນແນໃສ່ເພື່ອຈຸດປະສົງອື່ນ ບໍ່ແມ່ນຈຸດປະສົງ ຂອງການເຮັດນິຕິກຳນັ້ນ ແລະ ບໍ່ໄດ້ຕັ້ງໃຈໃຫ້ນິຕິກຳນັ້ນມີຜົນບັງຄັບ ກັບ ພວກກ່ຽວຢ່າງແທ້ຈິງ ແຕ່ເປັນພຽງການຫຼອກລວງໃຫ້ບຸກຄົນອື່ນເຫັນວ່າ ນິຕິກຳທີ່ພວກຕົນສ້າງຂຶ້ນນັ້ນເປັນນິຕິກຳທີ່ແທ້ຈິງ ເຊັ່ນໃນຕົວຢ່າງ 3. ປະມວນກົດໝາຍແພ່ງກຳນົດຮູບການ ຂອງບັນດາສັນຍາສະເພາະ ດັ່ງລຸ່ມນີ້ ທີ່ຕ້ອງເຮັດເປັນລາຍລັກອັກສອນ: 1. ສັນຍາເຊົ່າຊື້ (ມາດຕາ 414) 2. ສັນຍາ ການມອບອະສັງຫາລິມະຊັບ (ມາດຕາ 421) 3. ສັນຍາກູ້ຢືມ (ມາດຕາ 430) 4. ສັນຍາເຊົ່າຊັບ (ມາດຕາ 434) 5. ສັນຍາສຳປະທານ (ມາດຕາ 439) 6. ສັນຍາປະກັນໄພ (ມາດຕາ 465) ນອກຈາກນີ້ ເຖິງແມ່ນປະມວນກົດໝາຍແພ່ງ ບໍ່ໄດ້ກຳນົດຢ່າງຈະແຈ້ງວ່າ ຕ້ອງກຳນົດເປັນລາຍລັກອັກສອນ ແຕ່ກໍຍັງມີບາງສັນຍາໃນພາກປະຕິບັດຕົວຈິງ ຕ້ອງເຮັດເປັນລາຍລັກອັກສອນ ເຊັ່ນ: 7. ສັນຍາມອບໝາຍ-ຕ້ອງເຮັດໃບມອບສັນທະ (ມາດຕາ 446) 8. ສັນຍາຂາຍຝາກ (ມາດຕາ 427) 9. ສັນຍາຊື້ຂາຍຊັບ ທີ່ຕ້ອງຂຶ້ນທະບຽນ (ມາດຕາ 406).
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 119, 123, 124, ແລະ 407 ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2015; ມາດຕາ 115 ຂອງປະມວນກົດໝາຍແພ່ງ ແລະ ພານິດ ໄທ.
ມາດຕາອ້າງອີງ	ມາດຕາ 17 ຂໍ້ 4, ມາດຕາ 21, ມາດຕາ 376 ຂອງປະມວນກົດໝາຍແພ່ງ; ມາດຕາ 24, ມາດຕາ 28, 406, 414, 421, 427, 430, 434, 439, 446, 465 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ	ສືບຕໍ່ຄົ້ນຄວ້າ.

ມາດຕາ 24 ນິຕິກຳເປັນໂມຄະບໍ່ເດັດຂາດ

ນິຕິກຳເປັນໂມຄະບໍ່ເດັດຂາດ ແມ່ນນິຕິກຳ ທີ່ເຮັດຂຶ້ນ ໂດຍຂັດກັບສິດ ແລະ ຜົນປະໂຫຍດ ຂອງ ບຸກຄົນ ຊຶ່ງມີດັ່ງນີ້:

1. ນິຕິກຳທີ່ເຮັດຂຶ້ນ ໂດຍບໍ່ມີຄວາມສະໝັກໃຈ ເຊັ່ນ ການຫຼົງຜິດ, ການຕົວະຍົວະ ຫຼອກລວງ, ການບັງຄັບນາບຂູ່ ຫຼື ການໃຊ້ຄວາມຮຸນແຮງ ຫຼື ຄວາມອັບປະໂຫຍດຂອງ ຝ່າຍໃດໜຶ່ງ;
2. ນິຕິກຳທີ່ເຮັດຂຶ້ນ ໂດຍຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດ;
3. ນິຕິກຳທີ່ເຮັດຂຶ້ນ ໂດຍຜູ້ຂາດສະຕິສຳນຶກ ຫຼື ຢູ່ໃນສະພາບມຶນເມົາອັນໜັກໜ່ວງ;
4. ນິຕິກຳທີ່ເຮັດຂຶ້ນ ໂດຍເຈດຕະນາບໍ່ດີຂອງຜູ້ຕາງໜ້າ;
5. ນິຕິກຳທີ່ເຮັດຂຶ້ນ ດ້ວຍຄວາມຈຳເປັນ ໃນສະພາບການໜັກໜ່ວງເປັນພິເສດ.

ນິຕິກຳເປັນໂມຄະບໍ່ເດັດຂາດ ຈະຖືວ່າເປັນນິຕິກຳທີ່ໃຊ້ໄດ້ ຖ້າຫາກມີການຮັບຮອງເອົາຈາກຜູ້ ທີ່ເສຍສິດ ແລະ ຜົນປະໂຫຍດແລ້ວ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ຄວາມໝາຍຂອງນິຕິກຳທີ່ເປັນໂມຄະບໍ່ເດັດຂາດ ແລະ ເງື່ອນໄຂ ທີ່ພາໃຫ້ເປັນໂມຄະ, ພ້ອມທັງຜົນສະທ້ອນຕໍ່ສິດ ແລະ ຜົນປະ�โຫຍດຂອງ ບຸກຄົນທີ່ເຮັດນິຕິກຳນັ້ນ. ນອກຈາກນີ້ ເພື່ອໃຫ້ຮູ້ວ່ານິຕິກຳທີ່ເປັນໂມຄະບໍ່ເດັດ ຂາດນັ້ນ ຖ້າຫາກຜູ້ເສຍຜົນປະໂຫຍດຫາກເຫັນດີຮັບຮອງເອົາ ກໍຖືວ່ານິຕິກຳນັ້ນ ໃຊ້ໄດ້.
ຕົວຢ່າງ	1. **ຂໍ້ 1 ນິຕິກຳເຮັດຂຶ້ນດ້ວຍຄວາມຫຼົງຜິດ:** **ກ** ຕ້ອງການຊື້ປາປາກ ຈາກ **ຂ** ແຕ່ **ຂ** ເຂົ້າໃຈວ່າ **ກ** ຕ້ອງການຊື້ປາເກັດ ແລບ, ໂດຍບໍ່ໄດ້ກວດກາເບິ່ງຄືນ **ກ** ຊື້ປາເກັດແລບ ແລະຈ່າຍເງິນ ເມື່ອ ມາຮອດເຮືອນຕົນເອງ ຈຶ່ງຮູ້ວ່າ **ຂ** ຫຼົງເອົາປາເກັດແລບ ໃຫ້ຕົນ ແລະ ຮູ້ ວ່າຕົນລືມບອກເອົາປາຊະນິດໃດ ເພາະຕອນທີ່ບອກໃຫ້ ຜູ້ຂາຍ **ຂ** ຊັ່ງປາ ໃຫ້ນັ້ນ ຕົນກໍເອົາມືຊີ້ ແລະ ບອກວ່າເອົາໂຕນີ້ ໂດຍທີ່ບໍ່ໄດ້ບອກວ່າເອົາ ຊະນິດໃດ. ກໍລະນີນີ້ ແມ່ນການຊື້ຂາຍດ້ວຍການຫຼົງຜິດ ໃນຕົວເປົ້າໝາຍ ຂອງສັນຍາ (ປາ) ຊຶ່ງຕ່າງຝ່າຍຕ່າງເຂົ້າໃຈຄົນລະຢ່າງກັນ. ກໍລະນີນີ້ ຖືເປັນ ນິຕິກຳ ຫຼື ສັນຍາເປັນໂມຄະບໍ່ເດັດຂາດ ຍ້ອນຄວາມຫຼົງຜິດ ແລະ ຜູ້ຊື້ **ກ** ຍອມຮັບເອົາປາເກັດແລບແລ້ວກໍຖືວ່ານິຕິກຳ ຫຼື ສັນຍາມີຜົນສັກສິດ; ແຕ່ ຖ້າ **ກ** ບໍ່ຍອມຮັບເອົາ ຜູ້ກ່ຽວກໍສາມາດທ້ວງນຳຜູ້ຂາຍ ຂໍປ່ຽນເອົາປາປາກທີ່ ຕົນຢາກໄດ້ກໍໄດ້; ໃນກໍລະນີນີ້ ຖ້າ **ຂ** ຫາກເຫັນດີປ່ຽນກໍສາມາດປ່ຽນໄດ້, ຖ້າ **ຂ** ບໍ່ເຫັນດີຖືວ່າສັນຍານີ້ເປັນໂມຄະບໍ່ເດັດຂາດ ແລະ ປະຕິບັດຕາມ ມາດຕາ 28 ວັກ 6 ຂອງປະມວນກົດໝາຍແພ່ງ. 2. **ຂໍ້ 1 ນິຕິກຳເຮັດຂຶ້ນດ້ວຍການຕົວະຍົວະຫຼອກລວງ:** **ກ** ເປີດຮ້ານຂາຍເຄື່ອງປະດັບເງິນ, ຄຳ ຢູ່ ຕະຫຼາດ. **ຂ** ເຫັນສາຍແຂວນ ຄຳ ງາມ ຈຶ່ງຊື້ ແລະ ກ່ອນຊື້ກໍໄດ້ຖາມ **ກ** ຊຶ່ງເປັນຜູ້ຂາຍວ່າ ສາຍແຂວນນີ້ເປັນ ຄຳແທ້ບໍ່ ຫຼື ຄຳຍ້ອມ, **ກ** ໄດ້ບອກວ່າ ເປັນຄຳແທ້ ແລະ ມີໃບຮັບປະກັນ ຂອງຮ້ານຄັກແນ່ **ກ** ຈຶ່ງຊື້ສາຍແຂວນນັ້ນໃນລາຄາຫຼຸດລາຄາຕະຫຼາດໃນ ເວລານັ້ນ 12,000,000 ກີບ, ລາຄາຢູ່ຮ້ານອື່ນ 20,000,000 ກີບ. ແຕ່ ຜ່ານໄປໄດ້ ສາມເດືອນ ສັງເກດເຫັນວ່າ ສີຂອງສາຍແຂວນປ່ຽນໄປ, ຈາກ

ສີຄຳ ເປັນສີທອງແດງ, **ຂ** ຈຶ່ງທັກທ້ວງນຳ **ກ**, ແຕ່ **ກ** ບໍ່ຍອມປ່ຽນສາຍ ແຂວນຄຳໃຫ້ **ຂ** ໂດຍອ້າງວ່າຊື້ອອກຮ້ານແລ້ວປ່ຽນບໍ່ໄດ້. ກໍລະນີນີ້ **ກ** ໄດ້ໃຊ້ເລ່ລ່ຽມຕົວະຍົວະຫຼອກລວງໃຫ້ **ຂ** ຊື້ສາຍແຂນທອງແດງ ຈາກຕົນ ໂດຍ ຕົວະວ່າເປັນສາຍແຂນຄຳ ທີ່ **ຂ** ຢາກໄດ້. ສັນຍາຊື້ຂາຍລະຫວ່າງ **ກ** ແລະ **ຂ** ຈຶ່ງເປັນໂມຄະບໍ່ເດັດຂາດ.

3. **ຂໍ້ 1 ນິຕິກຳເຮັດຂຶ້ນດ້ວຍການບັງຄັບນາບຂູ່:**

   ກ ຢາກຊື້ດິນ ນຳ **ຂ** ເພື່ອໄປຂາຍຕໍ່ໃຫ້ **ຄ** ແຕ່ **ຂ** ບໍ່ຂາຍໃຫ້ **ກ** ເພາະຢາກ ເອົາໄວ້ໃຫ້ເປັນມູນມໍຣະດົກໃຫ້ລູກຫຼານ. **ກ** ເລີຍຂົ່ມຂູ່ **ຂ** ດ້ວຍວາຈາວ່າ ຖ້າບໍ່ຍອມຂາຍໃຫ້ ຈະບໍ່ຮັບປະກັນຄວາມປອດໄພຂອງ **ຂ** ແລະ ຄອບຄົວ, **ຂ** ມີຄວາມຢ້ານກົວ ຈຶ່ງຍອມຂາຍທີ່ດິນໃຫ້ ແລະ ຂາຍໃນລາຄາຖືກ ເພື່ອ ແລກກັບຄວາມປອດໄພ ຕາມການຂົ່ມຂູ່ຂອງ **ກ**. ຕໍ່ມາ **ຂ** ໄດ້ຮ້ອງຟ້ອງ ຕໍ່ສານ ເພື່ອໃຫ້ພິຈາລະນາລົບລ້າງນິຕິກຳດັ່ງກ່າວ ຕາມມາດຕາ 27 ຂອງ ປະມວນກົດໝາຍແພ່ງ ຍ້ອນຕົນບໍ່ສະໝັກໃຈ ທີ່ເຮັດນິຕິກຳນັ້ນກໍຍ້ອນ ຖືການບາບຂູ່ ແລະ ກໍໄດ້ຮັບຄວາມອັບປະໂຫຍດ.

4. **ຂໍ້ 2 ນິຕິກຳທີ່ເຮັດຂຶ້ນໂດຍ ຜູ້ບໍ່ມີຄວາມສາມາດທາງດ້ານການ ປະພຶດ:**

   ກ ອາຍຸ 12 ປີ ບອກກັບພໍ່ແມ່ວ່າ ຂໍ ເງິນ 3.000.000 ກີບ ເພື່ອໄປຮຽນ ພາສາອັງກິດ ແຕ່ໂຕຈິງ ໄປຊື້ຄອມ ພິວເຕີ ຈາກ **ຂ** ໃນລາຄາ 2.500.000 ກີບ ກໍລະນີນີ້ ສັນຍາເປັນໂມຄະບໍ່ເດັດຂາດ ຍ້ອນວ່າ ເປັນການເຮັດສັນຍາ ກັບເດັກທີ່ຍັງບໍ່ທັນພົ້ນກະສຽນອາຍຸ. ກໍລະນີນີ້ ຖ້າຫາກພໍ່ແມ່ ຫຼື ຜູ້ປົກຄອງ ຫາກຮັບຮອງເອົາ ກໍຖືວ່າເປັນນິຕິກຳທີ່ໃຊ້ໄດ້.

5. **ຂໍ້ 3 ນິຕິກຳທີ່ເຮັດຂຶ້ນໂດຍຜູ້ຂາດສະຕິສຳນຶກ ຫຼື ຢູ່ໃນສະພາບ ມຶນເມົາອັນໜັກໜ່ວງ:**

   ກ ໄດ້ວາງຢາໃຫ້ **ຂ** ຈົນຢູ່ໃນສະພາບທີ່ບໍ່ສາມາດຄວບຄຸມສະຕິໄດ້ ແລະ ຕໍ່ມາ **ກ** ໄດ້ບອກກັບ **ຂ** ວ່າ ສາຍຄຳງາມແທ້ ຂໍໃສ່ໄດ້ບໍ ຈາກນັ້ນ **ຂ** ຈຶ່ງໄດ້ ຖອດສາຍຄໍ ໜັກ 5 ບາດ ໃຫ້ **ກ** ໃນກໍລະນີນີ້ **ຂ** ຢູ່ໃນສະພາບຂາດສະຕິ ແລະ ບໍ່ຮູ້ວ່າ ຕົນໄດ້ເອົາສາຍຄໍຄຳ 5 ບາດ ໃຫ້ **ກ** ຖືວ່າ ການມອບຊັບນັ້ນ ເປັນໂມຄະບໍ່ເດັດຂາດ.

6. **ຂໍ້ 3 ນິຕິກຳທີ່ເຮັດຂຶ້ນ ໂດຍຜູ້ຂາດສະຕິສຳນຶກ ຫຼື ຢູ່ໃນສະພາບ ມຶນເມົາອັນໜັກໜ່ວງ:**

   ກ (ຜູ້ຊາຍ) ໄດ້ດື່ມເຫຼົ້າເມົາ ຈົນຂາດສະຕິ ແລະ ເອົາ ສາຍຄໍ ໃຫ້ **ຂ** (ຜູ້ຍິງ) ມື້ຕໍ່ມາພາຍຫຼັງສະຕິກັບມາສົມບູນ ຈຶ່ງໄດ້ໄປທວງເອົາຄືນລະບອກວ່າ ທີ່ ມອບໃຫ້ມື້ຄືນນັ້ນຖືວ່າ ເປັນໂມຄະຍ້ອນ **ກ** ຂາດສະຕິ.

7. **ຂໍ້ 4 ນິຕິກຳທີ່ເຮັດຂຶ້ນໂດຍເຈດຕະນາບໍ່ດີຂອງຜູ້ຕາງໜ້າ:**

   ກ ເປັນຜູ້ຕາງໜ້າ ຂອງ ໂຮງງານສີມັງ **ຂ**, **ກ** ມີໜ້າທີ່ ຈັດຊື້ວັດຖຸດິບ ຕາມມາດຕະຖານຂອງໂຮງງານ ແຕ່ **ກ** ພັດຊື້ວັດຖຸດິບທີ່ມີຄຸນນະພາບ ຕ່ຳກວ່າມາດຕະຖານ ໃນລາຄາເທົ່າກັນວັດຖຸດິບທີ່ມີຄຸນນະພາບທີ່ຕ້ອງ ການ ໂດຍ **ກ** ບອກໃຫ້ຮ້ານຂາຍວັດຖຸດິບນັ້ນ ໃສ່ລາຄາຕາມວັດຖຸດິບ ທີ່ຄຸນນະພາບດີ ສ່ວນເງິນທີ່ຫັກອອກຈາກລາຄາທີ່ຕ່າງກັນນັ້ນ ແມ່ນ **ກ** ແລະ ຮ້ານຄ້າ ນຳມາແບ່ງກັນ. ກໍລະນີນີ້ ເຫັນວ່າ **ກ** ມີເຈດຕະນາບໍ່ດີ

	ບໍ່ມີຄວາມສັດຊື່ໃນການປະຕິບັດໜ້າທີ່ ເປັນຜູ້ຈັດຫາວັດຖຸດິບ ຖືວ່າ ເປັນເຈດຕະນາບໍ່ດີຂອງຜູ້ຕາງໜ້າ ໂຮງງານ ສາມາດປະຕິເສດບໍ່ເອົາວັດຖຸດິບທີ່ **ກ** ຊື້ມານັ້ນ. 8. **ຂໍ້ 5 ນິຕິກຳທີ່ເຮັດຂຶ້ນດ້ວຍຄວາມຈຳເປັນໃນສະພາບການໝັກໝ່ວງເປັນພິເສດ:** **ກ** ເຈົ້າຂອງຮ້ານຂາຍຢາ ຕໍ່ມາເກີດພະຍາດລະບາດຂຶ້ນ **ຂ** ໄດ້ໄປຊື້ຢານຳ **ກ**, ໃນເວລາດັ່ງກ່າວ **ກ** ໄດ້ສວຍໂອກາດຂາຍຢາໃນລາຄາສູງ ແລະ **ຂ** ບໍ່ສາມາດຊອກຊື້ໃນຮ້ານອື່ນໄດ້ ເພາະຢາປະເພດນີ້ມີແຕ່ຮ້ານຂອງ **ກ** ເທົ່ານັ້ນ, **ກ** ຈຶ່ງໄດ້ຂາຍ ຈາກລາຄາປົກກະຕິ 10.000 ກີບ ເປັນ 50.000 ກີບ. ສ່ວນທີ່ເກີນ 40.000 ກີບ ແມ່ນເປັນໂມຄະ. 9. **ຂໍ້ 5 ນິຕິກຳທີ່ເຮັດຂຶ້ນ ດ້ວຍຄວາມຈຳເປັນ ໃນສະພາບການໝັກໝ່ວງເປັນພິເສດ**: **ກ** ເກີດອຸບປະຕິເຫດ ຊຶ່ງຕ້ອງການປິ່ນປົວຢ່າງຮີບດ່ວນ ແຕ່ໃນເຂດໃກ້ຄຽງນັ້ນມີແຕ່ ຄຣິນິກ ຂອງ **ຂ** ຍ້ອນເຫັນວ່າ **ກ** ຕ້ອງມີຄຳຈຳເປັນຕ້ອງໄດ້ຮັບການປິ່ນປົວ ຈຶ່ງສວຍໂອກາດຂຶ້ນລາຄາຄ່າປິ່ນປົວ ຈາກ 1.000.000 ກີບ ເປັນ 2.000.000 ກີບ. ເຫັນວ່າຄ່າປິ່ນປົວທີ່ເກີນ 1.000.000 ກີບນັ້ນ ເປັນໂມຄະ ເພາະເປັນການສວຍໂອກາດຂຶ້ນລາຄາປິ່ນປົວ ໃນສະພາບທີ່ **ກ** ມີຄວາມຈຳເປັນ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 23 ຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ປີ 2008 ເພື່ອຮັບຮູ້ຄວາມໝາຍ ແລະ ຮູບການຂອງການເປັນໂມຄະເດັດຂາດ ຂອງນິຕິກຳ ໃຫ້ຊັດເຈນ ແລະ ຈະແຈ້ງຂຶ້ນກວ່າເກົ່າ. ຈຸດແຕກຕ່າງລະຫວ່າງນິຕິກຳເປັນໂມຄະເດັດຂາດ ແລະ ບໍ່ເດັດຂາດແມ່ນ ໃນກໍລະນີທີ່ນິຕິກຳເປັນໂມຄະເດັດຂາດ ບໍ່ອະນຸຍາດໃຫ້ຄູ່ສັນຍາເຮັດນິຕິກຳຮັບຮອງເອົານິຕິກຳທີ່ເປັນໂມຄະ ສ່ວນນິຕິກຳທີ່ເປັນໂມຄະບໍ່ເດັດຂາດ ກົດໝາຍອະນຸຍາດໃຫ້ຜູ້ເຮັດນິຕິກຳຮັບຮອງ ເອົານິຕິກຳນັ້ນ (ເບິ່ງມາດຕາ 23). ຄຳວ່າ “ໂມຄະ” ໝາຍເຖິງ ເປົ່າ, ຫວ່າງ, ບໍ່ມີປະໂຫຍດ, ບໍ່ມີຜົນ (ວັດຈະ ນານຸກົມພາສາລາວ, ສະຖາບັນວິທະຍາສາດສັງຄົມແຫ່ງຊາດ, ໜ້າ 779). ນິຕິກຳເຊື່ອງອຳ” ໝາຍເຖິງ ນິຕິກຳທີ່ເຈົ້າກຳສ້າງຂຶ້ນເພື່ອແນໃສ່ບໍ່ໃຫ້ມີຜົນຜູກພັນແທ້ຈິງ. ອີງໃສ່ເງື່ອນໄຂຂອງນິຕິກຳ ເປົ້າໝາຍ ແລະ ຈຸດປະສົງຂອງນິຕິກຳ ບໍ່ມີຂຶ້ນຈິງ ເຖິງວ່າເງື່ອນໄຂອື່ນຈະຖືກຕ້ອງ ແລະ ຄົບຖ້ວນກໍຕາມ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 3/2, 5, 95, 96, 107, 108, 120 ຂອງປະມວນກົດໝາຍຍີ່ປຸ່ນ 2017; ມາດຕາ 1147, 1157, 1181 ຂອງປະມວນແພ່ງຝຣັ່ງ ປີ 2016; ມາດຕາ 105, 107, 108, 119, 120, 123, 138 ວັກ 2, 181 ຂອງ ປະມວນກົດໝາຍແພ່ງເຢຍລະມັນ.
ມາດຕາອ້າງອີງ	ມາດຕາ 17 ຂໍ້ 4, ມາດຕາ 21, ມາດຕາ 28 ແລະ ມາດຕາ 376 ຂອງປະມວນກົດໝາຍແພ່ງ.

ຂໍ້ມູນອື່ນ	ມາດຕາ 24 ວັກ 1 ຂໍ້ 4 ແມ່ນຜູ້ຕາງໜ້າເຄື່ອນໄຫວຢູ່ໃນຂອບເຂດສິດທີ່ຕົນໄດ້ຮັບ ແຕ່ມີເຈດຕະນາບໍ່ດີ, ແຕ່ມາດຕາ 41 ແມ່ນຜູ້ຕາງໜ້າເຄື່ອນໄຫວເກີນຂອບເຂດສິດທີ່ຕົນໄດ້ຮັບ. ສືບຕໍ່ຄົ້ນຄວ້າ.

ມາດຕາ 25 ນິຕິກຳເປັນໂມຄະທັງໝົດ ຫຼື ບາງສ່ວນ

ນິຕິກຳເປັນໂມຄະທັງໝົດ ແມ່ນນິຕິກຳທີ່ເນື້ອໃນທັງໝົດໃຊ້ບໍ່ໄດ້.

ນິຕິກຳເປັນໂມຄະບາງສ່ວນ ແມ່ນນິຕິກຳທີ່ເນື້ອໃນສ່ວນໃດໜຶ່ງໃຊ້ບໍ່ໄດ້.

ຈຸດປະສົງ	ເພື່ອກຳນົດຫ້ຮູ້ຄວາມໝາຍຂອງນິຕິກຳທີ່ເປັນໂມຄະທັງໝົດ ຫຼື ບາງສ່ວນ.
ຕົວຢ່າງ	1. **ນິຕິກຳທີ່ເປັນໂມຄະທັງໝົດ:** **ກ** ບັງຄັບໃຫ້ພໍ່ ມອບດິນນາໃຫ້ຕົນ ເພາະ **ກ** ຕິດການພະນັນ ແລະ ກຳຈະເອົາດິນນານັ້ນໄປຂາຍ ໂດຍ **ກ** ບັງຄັບວ່າ ຖ້າບໍ່ມອບໃຫ້ ຕົນຈະທຳຮ້າຍຮ່າງກາຍແມ່. ໃນກໍລະນີນີ້ ຖືເປັນນິຕິກຳທີ່ເປັນໂມຄະບໍ່ເດັດຂາດ, ແລະ ເປັນນິຕິກຳທີ່ເປັນໂມຄະທັງໝົດ. ເຖິງຢ່າງໃດກໍຕາມຖ້າ ພໍ່ ແລະ ແມ່ ຢັ້ງຢືນເອົາ ເຖິງວ່າຈະຖືກບັງຄັບກໍຕາມ ຫາກເຫັນດີມອບໃຫ້ **ກ** ກໍຖືວ່ານິຕິກຳນີ້ໃຊ້ໄດ້. 2. **ນິຕິກຳທີ່ເປັນໂມຄະບາງສ່ວນ:** **ກ** ຕົກລົງ ກູ້ຢືມເງິນ ຈາກ **ຂ** ແລະ ຕົກລົງໃຫ້ໄລ່ດອກເບ້ຍ 10% ຕໍ່ເດືອນ, ທັງຍັງຕົກລົງວ່າ ຖ້າບໍ່ສາມາດໃຊ້ໄດ້ ເຫັນດີໃຫ້ເອົາທັງດອກເບ້ຍ ແລະ ຕົ້ນທຶນທີ່ຄ້າງມາຄິດໄລ່ເປັນດອກເບ້ຍ ແລະ ຕົ້ນທຶນທີ່ຕ້ອງຈ່າຍໃນເດືອນຖັດໄປອີກ (ຕົ້ນທຶນດອກ). ເຖິງແມ່ນວ່າ **ກ** ແລະ **ຂ** ມີຄວາມສະໝັກໃຈກໍຕາມ ແຕ່ການສະໝັກໃຈຂອງຜູ້ເຮັດນິຕິກຳທັງສອງຝ່າຍ ຫຼື ຄູ່ສັນຍາ ຂັດກັບກົດໝາຍ ກໍຄືຂັດກັບຄວາມເປັນລະບຽບຮຽບร้อยຂອງສັງຄົມ ເຊັ່ນ ຂັດກັບດອກເບ້ຍທີ່ກຳນົດໄວ້ໃນກົດໝາຍ ຕາມມາດຕາ 431 ຂອງປະມວນກົດໝາຍແພ່ງກ່ຽວກັບດອກເບ້ຍຂອງການກູ້ຢືມ ແລະ ຂັດກັບປະມວນກົດໝາຍອາຍາ ມາດຕາ 298 ການຄິດໄລ່ດອກເບ້ຍສູງ. ກໍລະນີນີ້ **ກ** ສາມາດຮ້ອງຂໍຕໍ່ສານໃຫ້ພິຈາລະນາຄວາມເປັນໂມຄະຂອງດອກເບ້ຍ; ສ່ວນສັນຍາການກູ້ຢືມຍັງມີຜົນສັກສິດຍ້ອນກົງກັນກັບຄວາມສະໝັກໃຈ ຂອງຜູ້ເຮັດສັນຍາ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 21 ຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ຂໍ້ຜູກພັນນອກສັນຍາ ປີ 2008 ປັບປຸງສະເພາະຄຳສັບເທົ່ານັ້ນເພື່ອໃຫ້ມີຄວາມສອດຄ່ອງກັບພາກນິຕິກຳຂອງປະມວນກົດໝາຍແພ່ງ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 130 ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2015.

ມາດຕາອ້າງອີງ	ມາດຕາ 17 ຂໍ້ 4, ມາດຕາ 19, ມາດຕາ 20, ມາດຕາ 21, ມາດຕາ 27, ມາດຕາ 28, ມາດຕາ 276 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ	ສືບຕໍ່ຄົ້ນຄວ້າ.

ມາດຕາ 26 ການຢັ້ງຢືນຄວາມເປັນໂມຄະເດັດຂາດຂອງນິຕິກຳ

ສານ ເປັນຜູ້ຕົກລົງຢັ້ງຢືນຄວາມເປັນໂມຄະເດັດຂາດຂອງນິຕິກຳ ຕາມການຮ້ອງຂໍຂອງຜູ້ເຮັດນິຕິກຳ ທີ່ກ່ຽວຂ້ອງ ຫຼື ຕາມການສະເໜີຂອງຫົວໜ້າອົງການໄອຍະການ.

ຈຸດປະສົງ	ເພື່ອໃຫ້ອຳນາດສານ ແລະ ປົກປ້ອງບຸກຄົນທີ່ກ່ຽວຂ້ອງ ກັບ ຄວາມເປັນໂມຄະເດັດຂາດຂອງນິຕິກຳ.
ຕົວຢ່າງ	1. ເບິ່ງຕົວຢ່າງ 4 ມາດຕາ 23 ຂອງບົດອະທິບາຍປະມວນກົດໝາຍແພ່ງ (ຂ້າງເທິງນີ້). **ກ** ແລະ **ຂ** ພີ່ວເມຍ ເຫັນວ່າຫຼານສາວຂອງຕົນ **ຄ** ບໍ່ມີບ່ອນຢູ່ອາໄສ ຈຶ່ງຕົກລົງມອບ ອະສັງຫາລິມະຊັບ-ເຮືອນ້ອຍຕິດດິນນາ ຂອງພວກຕົນ (ຖຽງນາ) ພ້ອມດ້ວຍ ດິນນາ 1 ໄຮ່ສອງງານ ໃຫ້ຫຼານສາວ ເນື່ອງຈາກເຮືອນຂອງຫຼານສາວຖືກໄຟໄໝ້ໝົດ ແລະ ຄອບຄົວຂອງຫຼານສາວຈະໄດ້ມີບ່ອນທຳມາຫາກິນ. ແຕ່ລູກສາວ ຂອງ **ກ** ແລະ **ຂ** ແຍ້ງວ່າ ການມອບຊັບດັ່ງກ່າວເປັນການມອບແບບປາກເປົ່າ ບໍ່ມີລາຍລັກອັກສອນ, ຈຶ່ງວ່າຖືເປັນໂມຄະເດັດຂາດ ເພາະບໍ່ຖືກຕ້ອງກັບຮູບການຂອງນິຕິກຳ ຊຶ່ງ ມາດຕາ 421 ຂອງປະມວນກົດໝາຍແພ່ງກ່ຽວກັບການມອບອະສັງຫາລິມະຊັບ ກຳນົດໃຫ້ການມອບຊັບເປັນລາຍລັກອັກສອນ ແລະ ຕ້ອງໄດ້ຮັບການຈົດທະບຽນຢ່າງຖືກຕ້ອງ. **ຄ** ຈຶ່ງຮ້ອງຟ້ອງມາຫາສານເພື່ອໃຫ້ຢັ້ງຢືນຄວາມເປັນໂມຄະເດັດຂາດຂອງນິຕິກຳ. ກໍລະນີນີ້, ສານຕ້ອງໃຊ້ດຸນພິນິດຕາມ ມາດຕາ 421 ເຖິງຖືວ່ານິຕິກຳເປັນໂມຄະເດັດຂາດ. 2. ເບິ່ງຕົວຢ່າງມາດຕາ 25 ຂອງບົດອະທິບາຍປະມວນກົດໝາຍແພ່ງ (ເທິງນີ້): **ກ** ຕົກລົງ ກູ້ຢືມເງິນ ຈາກ **ຂ** ແລະ ຕົກລົງໃຫ້ໄລ່ດອກເບ້ຍ 10% ຕໍ່ເດືອນ, ທັງຍັງຕົກລົງວ່າ ຖ້າບໍ່ສາມາດໃຊ້ໄດ້ ເຫັນດີໃຫ້ເອົາທັງດອກເບ້ຍ ແລະ ຕົ້ນທຶນທີ່ຄ້າງມາຄິດໄລ່ເປັນດອກເບ້ຍ ແລະ ຕົ້ນທຶນທີ່ຕ້ອງຈ່າຍໃນເດືອນ ຖັດໄປອີກ (ຕົ້ນທຶບດອກ). ເຖິງແມ່ນວ່າ **ກ** ແລະ **ຂ** ມີຄວາມສະໝັກໃຈກຳຕາມ ແຕ່ການສະໝັກໃຈຂອງຜູ້ເຮັດນິຕິກຳທັງສອງຝ່າຍ ຫຼື ຄູ່ສັນຍາ ຂັດກັບກົດໝາຍ ກໍຄືຂັດກັບຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ເຊັ່ນ ຂັດກັບດອກເບ້ຍທີ່ກຳນົດໄວ້ໃນກົດໝາຍ ຕາມມາດຕາ 431 ຂອງປະມວນກົດໝາຍແພ່ງ ກ່ຽວກັບດອກເບ້ຍຂອງການກູ້ຢືມ ແລະ ຂັດກັບປະມວນກົດໝາຍອາຍາ ມາດຕາ 298 ການຄິດໄລ່ດອກເບ້ຍສູງ. ກໍລະນີນີ້ **ກ** ສາມາດຮ້ອງຂໍຕໍ່ສານໃຫ້ພິຈາລະນາຄວາມເປັນໂມຄະຂອງດອກເບ້ຍ.

ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 22 ຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ປີ 2008 ຊຶ່ງກຳນົດອຳນາດຂອງສານໃນການພິຈາລະນາ ຢັ້ງຢືນຄວາມເປັນໂມຄະເດັດຂາດຂອງນິຕິກຳ ໃຫ້ຊັດເຈນຂຶ້ນກວ່າເກົ່າ ເພື່ອໃຫ້ມີຄວາມສອດຄ່ອງກັບພາກນິຕິກຳຂອງປະມວນກົດໝາຍແພ່ງ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 130, ວັກ 2 ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2015.
ມາດຕາອ້າງອີງ	ມາດຕາ 24, 28 ແລະ 431 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ	ສືບຕໍ່ຄົ້ນຄວ້າ.

ມາດຕາ 27 ການຂໍລົບລ້າງນິຕິກຳເປັນໂມຄະບໍ່ເດັດຂາດ

ຜູ້ໄດ້ຮັບຄວາມອັບປະໂຫຍດຈາກນິຕິກຳເປັນໂມຄະບໍ່ເດັດຂາດ ຕ້ອງແຈ້ງໃຫ້ອີກຝ່າຍໜຶ່ງໃນທັນໃດ ເພື່ອຍົກເລີກນິຕິກຳດັ່ງກ່າວ. ໃນກໍລະນີ ທີ່ຜູ້ກ່ຽວບໍ່ເຫັນດີຍົກເລີກແລ້ວ, ຜູ້ທີ່ໄດ້ຮັບຄວາມອັບປະໂຫຍດ ກໍມີສິດຮ້ອງຟ້ອງຕໍ່ສານ ເພື່ອພິຈາລະນາລົບລ້າງນິຕິກຳນັ້ນ.

ຈຸດປະສົງ	ເພື່ອໃຫ້ຮູ້ຂັ້ນຕອນຂອງການຂໍລົບລ້າງນິຕິກຳທາງແພ່ງ ທີ່ເປັນໂມຄະບໍ່ເດັດຂາດ
ຕົວຢ່າງ	ຈາກຕົວຢ່າງ 4 ຂອງ ມາດຕາ 24 ຂອງບົດອະທິບາຍປະມວນກົດໝາຍແພ່ງ (ຂ້າງເທິງ). **ກ** ອາຍຸ 12 ປີ ບອກກັບພໍ່ແມ່ວ່າ ຂໍເງິນ 3.000.000 ກີບ ເພື່ອໄປຮຽນພາສາອັງກິດ ແຕ່ໂຕຈິງ ໄປຊື້ຄອມພິວເຕີ ຈາກ **ຂ** ໃນລາຄາ 2.500.000 ກີບ ກໍລະນີນີ້ ສັນຍາເປັນໂມຄະບໍ່ເດັດຂາດ ຍ້ອນວ່າ ເປັນການເຮັດສັນຍາ ກັບເດັກທີ່ຍັງບໍ່ທັນພົ້ນກະສຽນອາຍຸ. ກໍລະນີນີ້ ຖ້າຫາກພໍ່ແມ່ ຫຼື ຜູ້ປົກຄອງ ຫາກຮັບຮອງເອົາ ກໍຖືວ່າເປັນນິຕິກຳທີ່ໃຊ້ໄດ້. ແຕ່ຖ້າ ພໍ່ແມ່ ຫຼື ຜູ້ປົກຄອງຂອງ **ກ** ບໍ່ເຫັນດີຮັບເອົາ, ພໍ່ແມ່ ຫຼື ຜູ້ປົກຄອງຂອງ **ກ** ສາມາດແຈ້ງໃຫ້ **ຂ** ເພື່ອຍົກເລີກສັນຍາຊື້ຂາຍໄດ້ ແລະ ຖ້າຫາກ **ຂ** ບໍ່ເຫັນດີຍົກເລີກ ພໍ່ແມ່ ຫຼື ຜູ້ປົກຄອງຂອງ **ກ** ມີສິດຮ້ອງຟ້ອງຕໍ່ສານເພື່ອພິຈາລະນາລົບລ້າງນິຕິກຳນີ້ໄດ້.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກມາດຕາ 22 ຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ປີ 2008 ຊຶ່ງໃຫ້ສິດແກ່ຜູ້ເຮັດນິຕິກຳ ທີ່ໄດ້ຮັບຄວາມອັບປະໂຫຍດຈາກນິຕິກຳທີ່ເປັນໂມຄະບໍ່ເດັດຂາດ ສາມາດຂໍຍົກເລີກນິຕິກຳນັ້ນໄດ້; ແຕ່ຖ້າອີກຝ່າຍຫາກບໍ່ເຫັນດີຍົກເລີກກໍມີສິດຟ້ອງສານເພື່ອລົບລ້າງໄດ້. ຄຳວ່າ “ຍົກເລີກນິຕິກຳ” ເປັນຄຳສັບສະເພາະໃຊ້ກັບຜູ້ເຮັດນິຕິກຳດ້ວຍກັນ. ສ່ວນຄຳວ່າ “ລົບລ້າງ” ໃຊ້ສະເພາະກັບສານ ຕາມດຸນພິນິດຂອງສານໃນການລົບລ້າງນິຕິກຳ. ສຳລັບນິຕິກຳ ຫຼື ສັນຍາທີ່ເປັນໂມຄະບໍ່ເດັດຂາດນັ້ນ ມີແຕ່ຜູ້ເຂົ້າຮ່ວມສາຍພົວພັນທາງແພ່ງ ຫຼື ຄູ່ສັນຍາເທົ່ານັ້ນທີ່ຈະຂໍລົບລ້າງໄດ້ ຊຶ່ງແຕກຕ່າງຈາກນິຕິກຳ ຫຼື ສັນຍາທີ່ເປັນໂມຄະເດັດຂາດ ຜູ້ເຂົ້າຮ່ວມສາຍພົວພັນທາງແພ່ງ ຫຼື ຄູ່ສັນຍາບໍ່ມີສິດຂໍລົບລ້າງໄດ້.

ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 540 (1) ຂອງປະມວນກົດໝາຍແພ່ງຍີ່ປຸ່ນ; ມາດຕາ 132, 423 ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2015.
ມາດຕາອ້າງອີງ	ມາດຕາ 24, 28, 72, 76, 80 ແລະ 376 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ	ສືບຕໍ່ຄົ້ນຄວ້າ.

ມາດຕາ 28 ຜົນສະທ້ອນຂອງນິຕິກຳເປັນໂມຄະ

ນິຕິກຳເປັນໂມຄະເດັດຂາດ ບໍ່ມີຜົນທາງດ້ານກົດໝາຍ ນັບແຕ່ວັນເຮັດນິຕິກຳ.

ໃນກໍລະນີທີ່ນິຕິກຳເປັນໂມຄະເດັດຂາດ ຫາກໄດ້ເຮັດຂຶ້ນໂດຍຂັດກັບຄວາມໝັ້ນຄົງຂອງຊາດ, ຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມນັ້ນ ໃຫ້ຮິບຊັບ ທີ່ໄດ້ປະຕິບັດຕໍ່ກັນແລ້ວທັງໝົດເປັນຂອງລັດ.

ສຳລັບນິຕິກຳເປັນໂມຄະເດັດຂາດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 23 ວັກທີໜຶ່ງ ຂໍ້ 2, 3 ແລະ 4 ຂອງປະມວນກົດໝາຍສະບັບນີ້ ໃຫ້ສິ່ງຊັບ ຫຼື ຜົນປະໂຫຍດ ທີ່ໄດ້ປະຕິບັດແລ້ວນັ້ນ ຄືນແກ່ກັນ.

ນິຕິກຳເປັນໂມຄະບໍ່ເດັດຂາດ ບໍ່ມີຜົນທາງດ້ານກົດໝາຍ ນັບແຕ່ວັນເຮັດນິຕິກຳ ເປັນຕົ້ນໄປ, ແຕ່ບໍ່ໃຫ້ມີຜົນສະທ້ອນຕໍ່ບຸກຄົນທີສາມ ທີ່ມີຄວາມບໍລິສຸດໃຈ.

ນິຕິກຳເປັນໂມຄະບໍ່ເດັດຂາດ ທີ່ເກີດຈາກການຕົວະຍົວະຫຼອກລວງ ຫຼື ບັງຄັບ ນາບຂູ່ ຫຼື ໃຊ້ຄວາມຮຸນແຮງ ຫຼື ຄວາມອັບປະໂຫຍດຂອງຝ່າຍໃດໜຶ່ງນັ້ນ, ຝ່າຍເສຍຜົນປະໂຫຍດຈະໄດ້ຮັບຊັບ ຫຼື ທົດແທນຄືນ, ສ່ວນຊັບຂອງອີກຝ່າຍໜຶ່ງ ໃຫ້ຮິບເປັນຂອງລັດ.

ສຳລັບນິຕິກຳເປັນໂມຄະບໍ່ເດັດຂາດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 24 ວັກທີໜຶ່ງ ຂໍ້ 2, 3, 4 ແລະ 5 ຂອງປະມວນກົດໝາຍສະບັບນີ້ ຖ້າຝ່າຍເສຍຜົນປະໂຫຍດ ຫາກບໍ່ເຫັນດີຮັບຮອງເອົາ ກໍໃຫ້ສິ່ງຊັບ ຫຼື ຜົນປະໂຫຍດຄືນແກ່ຜູ້ກ່ຽວ, ສ່ວນສິ່ງທີ່ຍັງບໍ່ໄດ້ປະຕິບັດຕໍ່ກັນ ກໍໃຫ້ເລີກແລ້ວກັນໄປ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນ ກໍລະນີທີ່ນິຕິກຳເປັນໂມຄະເດັດຂາດ ແລະ ກໍລະນີເປັນໂມຄະບໍ່ເດັດຂາດ ແລະ ຜົນຂອງນິຕິກຳທີ່ເປັນໂມຄະເດັດຂາດ ແລະ ບໍ່ເດັດຂາດ ແຕ່ລະກໍລະນີ.
ຕົວຢ່າງ	1. (ວັກໜຶ່ງ ແລະ ວັກ ສາມ): ຈາກຕົວຢ່າງ 3 ຂອງມາດຕາ 24 ຂອງບົດອະທິບາຍປະມວນກົດໝາຍແພ່ງ (ຂ້າງເທິງ) ຕົວຢ່າງ 3 (ຂໍ້ 1 ນິຕິກຳເຮັດຂຶ້ນດ້ວຍການບັງຄັບນາບຂູ່) **ກ** ຢາກຊື້ດິນ ນຳ **ຂ** ເພື່ອໄປຂາຍຕໍ່ໃຫ້ **ຄ** ແຕ່ **ຂ** ບໍ່ຂາຍໃຫ້ **ກ** ເພາະຢາກເອົາໄວ້ໃຫ້ເປັນມູນມໍຣະດົກໃຫ້ລູກຫຼານ. **ກ** ເລີຍຂົ່ມຂູ່ **ຂ** ດ້ວຍວາຈາວ່າ ຖ້າບໍ່ຍອມຂາຍໃຫ້ ຈະບໍ່ຮັບປະກັນຄວາມປອດໄພຂອງ **ຂ** ແລະ ຄອບຄົວ, **ຂ** ມີຄວາມຢ້ານກົວ ຈຶ່ງຍອມຂາຍທີ່ດິນໃຫ້ ແລະ ຂາຍໃນລາຄາຖືກ ເພື່ອແລກກັບຄວາມປອດໄພ ຕາມການຂົ່ມຂູ່ຂອງ **ກ**. ແຕ່ຕໍ່ມາ **ຂ** ໄດ້ຮ້ອງຟ້ອງຕໍ່ສານ ເພື່ອໃຫ້ພິຈາລະນາລົບລ້າງນິຕິກຳດັ່ງກ່າວ ຕາມມາດຕາ 27 ຂອງປະມວນກົດໝາຍແພ່ງ ຍ້ອນຕົນບໍ່ສະໝັກໃຈ ທີ່ເຮັດນິຕິກຳນັ້ນກໍຍ້ອນຖືກນາບຂູ່ ແລະ ກໍໄດ້ຮັບຄວາມອັບປະໂຫຍດ. ແຕ່ ກ່ອນໜ້າທີ່ **ກ** ຈະຮ້ອງຟ້ອງຕໍ່ສານນັ້ນ **ກ** ຂາຍດິນຕອນ ດັ່ງກ່າວ ໃຫ້ **ຄ** ຊຶ່ງ **ຄ** ກໍບໍ່ຮູ້ມາກ່ອນວ່າ **ກ** ໄດ້ສິດນຳໃຊ້ທີ່ດິນຕອນດັ່ງກ່າວ ແນວໃດ ແຕ່ **ຄ** ເຂົ້າໃຈວ່າ ແມ່ນ

	ທີ່ດິນ ທີ່ **ກ** ໄດ້ສິດນຳໃຊ້ຢ່າງຖືກຕ້ອງແທ້. ກໍລະນີນີ້ **ຄ** ຈະໄດ້ຮັບການປົກປ້ອງ; ສ່ວນນິຕິກຳທີ່ **ກ** ແລະ **ຂ** ສ້າງຂຶ້ນນັ້ນ ຫາກສານພິຈາລະນາແລ້ວເປັນໂມຄະ ກໍຖືວ່າ ນິຕິກຳນີ້ບໍ່ມີຜົນສັກສິດນັບແຕ່ເວລາທີ່ໄດ້ຕົກລົງຊື້ຂາຍສິດນຳໃຊ້ທີ່ດິນ ແລະ **ຂ** ຕ້ອງໄດ້ສົ່ງເງິນຄືນ; ແລະ **ກ** ກໍຕ້ອງໄດ້ສົ່ງທີ່ດິນຕອນດັ່ງກ່າວໃຫ້ **ຂ** ຄືນ, ແຕ່ **ກ** ຜັດຂາຍໄປແລ້ວ ສະນັ້ນ **ກ** ອາດຕ້ອງໄດ້ໃຊ້ແທນຄ່າເສຍຫາຍໃຫ້ **ຂ** ດ້ວຍທີ່ດິນຕອນອື່ນ ຫຼື ຊື້ຄືນຈາກ **ຄ** ມາໃຫ້ **ຂ**. 2. ວັກ 2: ວັນທີ 3 ມີນາ 2017 **ກ** ໄດ້ຕົວະຂາຍແຫວນທີ່ໂອບຄຳ ນ້ຳໜັກໜຶ່ງບາດ ໃຫ້ **ຂ** ລາຄາ ຈຳນວນ 5.000.000 ກີບ ໂດຍອ້າງວ່າມີຄວາມຈຳເປັນໃຊ້ເງິນ. ຕໍ່ມາ **ຂ** ສືບຮູ້ວ່າ ແຫວນຄຳທີ່ຕົນຊື້ນັ້ນ ທາງໃນເປັນຂີ້ກົ່ວຊຶ່ງໂອບດ້ວຍຄຳ ຈຶ່ງຮ້ອງຂໍລົບລ້າງສັນຍາ. ວັນທີ 20 ເມສາ 2017 ສັນຍາຖືກລົບລ້າງຕາມຄຳຕັດສິນຂອງສານ. ສັນຍານີ້ບໍ່ມີຜົນໃຊ້ໄດ້ ນັບວັນທີ 3 ມີນາ 2017 ເປັນຕົ້ນມາ. **ກ** ຕ້ອງສົ່ງເງິນ ຈຳນວນ 5.000.000 ໃຫ້ **ຂ** ສ່ວນແຫວນຄຳນັ້ນຖືກຮິບເປັນຂອງລັດຕາມຄຳຕັດສິນຂອງສານ. 3. ວັກ 5: ວັນທີ 4 ຕຸລາ 2017 **ຕ** ໄດ້ຊື້ຢາເສບຕິດນຳ **ຈ** ຊາວເມັດ ການຊື້ຂາຍນີ້ແຕະຕ້ອງເຖິງຄວາມເປັນລະບຽບຮຽບร้อยຂອງສັງຄົມ ຈຶ່ງເປັນໂມຄະເດັດຂາດ ນັບແຕ່ວັນທີ 4 ຕຸລາ 2017 ເປັນຕົ້ນມາ. ຢາເສບຕິດ ແລະເງິນຕ້ອງຖືກຮິບເປັນຂອງລັດຕາມຄຳຕັດສິນຂອງສານ. 4. ວັກ 6: ວັນທີ 2 ກຸມພາ 2017 **ກ** ໄດ້ເຮັດສັນຍາຊື້ລົດກະບະມືສອງນຳ **ຂ** ມູນຄ່າ ຈຳນວນ 80.000.000 ກີບ. ວັນທີ 2 ມີຖຸນາ 2017 ສັນຍາຖືກລົບລ້າງຕາມຄຳຕັດສິນຂອງສານ ຍ້ອນວ່າເວລາສອບຖາມຂໍ້ມູນກ່ຽວກັບລົດ **ຂ** ໄດ້ປົກປິດຂໍ້ມູນກ່ຽວກັບລົດທີ່ເຄີຍຖືກຕຳມາແລ້ວ ແຕ່ບອກວ່າລົດບໍ່ເຄີຍຖືກຕຳ. ສັນຍານີ້ບໍ່ມີຜົນໃຊ້ ໄດ້ນັບວັນທີ 2 ກຸມພາ 2017 ເປັນຕົ້ນມາ. ດັ່ງນັ້ນ, **ຂ**. ຕ້ອງສົ່ງເງິນ 80.000.000 ກີບໃຫ້ **ກ** ສ່ວນ **ກ** ຕ້ອງສົ່ງລົດກະບະຄືນໃຫ້ **ຂ**.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກມາດຕາ 23 ຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ປີ 2008 ແລະ ໄດ້ປັບປຸງໃຫ້ຊັດເຈນ ຂຶ້ນກວ່າເກົ່າ ແຍກກັນລະຫວ່າງ ໂມຄະບໍ່ເດັດຂາດ ແລະ ໂມຄະເດັດຂາດ. ໄດ້ກຳນົດເພີ່ມຈຸດທີ່ນັບຄວາມເປັນໂມຄະຂອງນິຕິກຳທັງນິຕິກຳທີ່ເປັນໂມຄະເດັດຂາດ ແລະ ນິຕິກຳທີ່ເປັນໂມຄະບໍ່ເດັດຂາດ (ວັກໜຶ່ງ ແລະ ວັກສີ່). ໄດ້ເພີ່ມເນື້ອໃນກ່ຽວກັບການປົກປ້ອງບຸກຄົນທີ່ສາມ ຈາກການເປັນໂມຄະບໍ່ເດັດຂາດຂອງນິຕິກຳ (ວັກໜຶ່ງ).

	ໄດ້ປັບປຸງເນື້ອໃນກ່ຽວກັບການຮິບຊັບເປັນຂອງລັດໃຫ້ຈະແจ້ງຍິ່ງຂຶ້ນ ໂດຍສະເພາະການຮິບຊັບຈາກນິຕິກຳ ທີ່ນິຕິກຳເປັນໂມຄະເດັດຂາດ ຫາກໄດ້ເຮັດຂຶ້ນ ໂດຍຂັດກັບຄວາມໝັ້ນຄົງຂອງຊາດ, ຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບร้อยຂອງສັງຄົມ. ໂດຍພື້ນຖານແລ້ວ ເມື່ອນິຕິກຳເປັນໂມຄະ (ທັງໂມຄະເດັດຂາດ ແລະ ໂມຄະບໍ່ເດັດຂາດ) ກໍຖືວ່ານິຕິກຳນັ້ນ ບໍ່ມີຜົນສັກສິດ ຫຼື ໃຊ້ບໍ່ໄດ້ "ແຕ່ເວລາທີ່ໄດ້ເຮັດນິຕິກຳ". ເມື່ອນິຕິກຳເປັນໂມຄະແລ້ວ, ສິ່ງທີ່ໄດ້ຮັບ ຫຼື ໄດ້ປະຕິບັດຕໍ່ກັນ ກໍຕ້ອງສົ່ງຄືນກັນ ຊຶ່ງສອດຄ່ອງກັບມາດຕາ 501, 502 ແລະ 503 ກ່ຽວກັບການຮັບຊັບສິ່ງຂອງ ຫຼື ຜົນປະໂຫຍດທີ່ຕົນບໍ່ມີສິດ ຕາມກໍລະນີ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 23-28, 72, 76, 80 ແລະ 377 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ	ສືບຕໍ່ຄົ້ນຄວ້າ.

ມາດຕາ 29 ນິຕິກຳທີ່ມີເຫດການເປັນເງື່ອນໄຂ

ນິຕິກຳທີ່ມີເຫດການເປັນເງື່ອນໄຂ ແມ່ນນິຕິກຳທີ່ກຳນົດ ເອົາເຫດການໃດໜຶ່ງທີ່ບໍ່ແນ່ນອນ ເປັນເງື່ອນໄຂ ເຮັດໃຫ້ນິຕິກຳມີຜົນໃຊ້ໄດ້ ຫຼື ສິ້ນສຸດ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ການເກີດຂຶ້ນ ຫຼື ສິ້ນສຸດລົງຂອງນິຕິກຳ ທີ່ມີສາເຫດມາຈາກເຫດການໃດໜຶ່ງທີ່ບໍ່ແນ່ນອນ ທີ່ອາດເກີດຂຶ້ນໃນອະນາຄົດ. ໃຫ້ຕົກອບຂອງສັນຍາໄວ້ລະອຽດ
ຕົວຢ່າງ	1. **ເຫດການໃດໜຶ່ງທີ່ພາໃຫ້ນິຕິກຳມີຜົນສັກສິດ:** **ກ** ຕົກລົງ ກັບ **ຂ** ວ່າ ຖ້າຄວາຍແມ່ຂອງຕົນອອກລູກຄວາຍ ໂຕທີ່ສອງ ແລ້ວຈະເອົາລູກຄວາຍ ໂຕທີ່ ສາມ ໃຫ້ **ຂ**. ການທີ່ຄວາຍຈະອອກລູກ ເຖິງສາມໂຕນັ້ນ ເປັນເຫດການທີ່ບໍ່ແນ່ນອນ ທີ່ຈະເກີດຂຶ້ນໃນອານາຄົດ, ຖ້າຫາກວ່າ ຄວາຍແມ່ຂອງ **ກ** ອອກລູກໂຕທີ່ສາມແທ້ ຖືວ່າ ສັນຍາມອບຄວາຍລະຫວ່າງ **ກ** ແລະ **ຂ** ມີຜົນສັກສິດ. 2. **ເຫດການໃດໜຶ່ງທີ່ພາໃຫ້ນິຕິກຳມີຜົນສັກສິດ:** **ກ** ສັນຍາ ກັບ **ຂ** ວ່າ ຖ້າພໍ່ຂອງ **ກ** ທີ່ກຳລັງປ່ວຍໂຊໄດ້ເສຍຊີວິດ **ກ** ຈະແຕ່ງງານກັບ **ຂ**; ແຕ່ມາ 2 ປີ **ກ** ໄດ້ມັກຮັກກັບພະຍາບານທີ່ມາປິ່ນປົວພໍ່ ຂອງ **ກ** ແລະ ພໍ່ຂອງ **ກ** ເສຍຊີວິດໃນເວລາຕໍ່ມາ ອີກ ສາມເດືອນ. ກໍລະນີນີ້ເຖິງວ່າເຫດການທີ່ບໍ່ແນ່ນອນ (ພໍ່ເສຍຊີວິດ) ໄດ້ເກີດຂຶ້ນແລ້ວ ກໍຕາມ **ກ**ບໍ່ສາມາດເຮັດໃຫ້ ນິຕິກຳ-ການສັນຍາແຕ່ງດອງກັບ **ຂ** ເກີດຂຶ້ນ ໄດ້ຍ້ອນວ່າການແຕ່ງດອງ ຕ້ອງມາຈາກພື້ນຖານການມັກຮັກກັນ ແລະ ດ້ວຍຄວາມສະໝັກໃຈ (ມາດຕາ 150 ເງື່ອນໄຂການແຕ່ງດອງ) ແລະ ນີ້ສະແດງໃຫ້ເຫັນວ່າເຖິງແມ່ນວ່າເຫດການທີ່ບໍ່ແນ່ນອນ ທີ່ເປັນເງື່ອນໄຂ ໄດ້ເກີດຂຶ້ນ

	ແລ້ວກໍຕາມ ຫາກເຫດການນີ້ບໍ່ສອດຄ່ອງ ກັບ ກົດໝາຍກໍພາໃຫ້ນິຕິກຳທີ່ມີ ເຫດການເປັນເງື່ອນໄຂ ເກີດມີຜົນສັກສິດໄດ້. 3. **ເຫດການໃດໜຶ່ງທີ່ພາໃຫ້ນິຕິກຳສິ້ນສຸດ:** **ກ** ໃຫ້ **ຂ** ຜູ້ເປັນນ້ອງຊາຍ ນຳໃຊ້ລິດຈັກຂອງຕົນ ຈົນກວ່າ **ຂ** ຈະເສັງໄດ້ທຶນການສຶກສາໄປຮຽນຕໍ່ຕ່າງປະເທດ; ຕໍ່ມາ **ຂ** ໄດ້ທຶນການສຶກສາໄປຮຽນຕໍ່ຢູ່ຕ່າງປະເທດ, ສັນຍາຊັບສິ່ງຂອງໄປນຳໃຊ້ ຂອງ **ກ** ແລະ **ຂ** ກໍສິ້ນສຸດລົງຕາມການຕົກລົງກັນ. ກໍລະນີນີ້ ເຫດການທີ່ວ່າ **ຂ** ເສັງໄດ້ທຶນການສຶກສານັ້ນເປັນເຫດການບໍ່ແນ່ນອນ ທີ່ຈະເກີດຂຶ້ນໃນອະນາຄົດ, ຖ້າຫາກວ່າ **ຂ** ບໍ່ໄດ້ທຶນການສຶກສາໄປຮຽນຕໍ່ຕ່າງປະເທດ, **ຂ** ກໍຍັງສາມາດນຳໃຊ້ລິດຈັກ ຕາມການຕົກລົງກັນຂອງ **ກ** ແລະ **ຂ**
ເຫດຜົນໃນສ້າງໃໝ່	ມາດຕານີ້ສ້າງຂຶ້ນໃໝ່ ຍ້ອນວ່າກົດໝາຍເດີມ ໂດຍສະເພາະກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ປີ 2008 ບໍ່ໄດ້ກຳນົດກ່ຽວການຳໃຊ້ "**ເຫດການໃດໜຶ່ງທີ່ບໍ່ແນ່ນອນ**" ເປັນເງື່ອນໄຂຂອງນິຕິກຳ ທີ່ພາໃຫ້ນິຕິກຳມີຜົນສັກສິດ ຫຼື ສິ້ນສຸດ, ແຕ່ໃນພາກປະຕິບັດຈິງ ການເອົາເຫດການທີ່ບໍ່ແນ່ນອນມາເປັນເງື່ອນໄຂຂອງການເຮັດໃຫ້ນິຕິກຳມີຜົນສັກສິດ ຫຼື ສິ້ນສຸດນັ້ນ ຍັງມີຢູ່ໃນສັງຄົມ ສະນັ້ນປະມວນກົດໝາຍແພ່ງຈຶ່ງຮັບຮູ້ ແລະ ກຳນົດຫຼັກການນີ້. ເຄື່ອງໝາຍສຳຄັນຂອງການນຳໃຊ້ເຫດການໃດໜຶ່ງທີ່ບໍ່ແນ່ນອນມາເປັນເງື່ອນໄຂຂອງນິຕິກຳມີຄື: - ເງື່ອນໄຂ ຕ້ອງເປັນເງື່ອນໄຂ ທີ່ຈະເກີດຂຶ້ນໃນອະນາຄົດ ແລະ ບໍ່ແນ່ນອນ; - ເງື່ອນໄຂ ຕ້ອງເປັນເງື່ອນໄຂທີ່ຖືກຕ້ອງຕາມກົດໝາຍ ທີ່ກະທົບເຮັດໃຫ້ນິຕິກຳນັ້ນມີຜົນສັກສິດ ຫຼື ສິ້ນສຸດ; - ເງື່ອນໄຂ ຕ້ອງເປັນເງື່ອນໄຂທີ່ຜູ້ເຮັດນິຕິກຳ ຕົກລົງເຫັນດີນຳກັນ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 127-137 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ; ມາດຕາ 182-190 ຂອງປະມວນກົດໝາຍແພ່ງ ແລະ ພານິດ ໄທ; ມາດຕາ 158-163 ຂອງປະມວນກົດໝາຍແພ່ງເຢຍລະມັນ; ມາດຕາ 1168-1184 ຂອງປະມວນກົດໝາຍແພ່ງຝຣັ່ງ; ມາດຕາ 325-331 ຂອງປະມວນກົດໝາຍແພ່ງກຳປູເຈຍ.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນ	ສືບຕໍ່ຄົ້ນຄວ້າ.

ມາດຕາ 30 ນິຕິກຳທີ່ມີເວລາເປັນເງື່ອນໄຂ

ນິຕິກຳທີ່ມີເວລາເປັນເງື່ອນໄຂ ແມ່ນ ນິຕິກຳທີ່ກຳນົດເວລາອັນແນ່ນອນ ເປັນເງື່ອນໄຂເຮັດໃຫ້ນິຕິກຳມີຜົນໃຊ້ໄດ້ ຫຼື ສິ້ນສຸດ..

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ ການເກີດຂຶ້ນ ຫຼື ສິ້ນສຸດລົງຂອງນິຕິກຳ ທີ່ມີສາເຫດມາຈາກເວລາອັນແນ່ນອນຈະເກີດຂຶ້ນໃນອະນາຄົດ.
ຕົວຢ່າງ	1. **ເວລາທີ່ພາໃຫ້ນິຕິກຳມີຜົນສັກສິດ:** ໃນວັນທີ 1 ມີນາ 2020, **ກ** ຕົກລົງຈະຂາຍ ລົດກະບະຂອງຕົນ ໃຫ້ **ຂ** ຖ້າຫາກວ່າ **ກ** ໄດ້ຮັບອະນຸມັດສັນຍາເຊົ່າຊື້ລົດຄັນໃໝ່ ຈາກ **ຄ** ໃນວັນທີ 10 ມີນາ 2020. ເວລາຜ່ານໄປສອງ ອາທິດ, ຮອດວັນທີ 14 ມີນາ 2020 **ຂ** ຈຶ່ງໄປທວງຖາມກ່ຽວກັບສັນຍາຊື້ຂາຍ ແລະ **ກ** ກໍໄດ້ບອກວ່າ ສັນຍາເຊົ່າຊື້ລົດຄັນໃໝ່ກັບທະນາຄານຍັງບໍ່ທັນໄດ້ຮັບອະນຸມັດເທື່ອ. ກໍລະນີສັນຍາຊື້ຂາຍລົດກະບະລະຫວ່າງ **ກ** ແລະ **ຂ** ຍັງບໍ່ທັນມີຜົນສັກສິດເທື່ອຍ້ອນວ່າ **ກ** ຍັງບໍ່ໄດ້ຊື້ລົດໃໝ່ເທື່ອ, ກໍລະນີນີ້ວັນເວລາໃນການໄດ້ຮັບອະນຸມັດສິນເຊື່ອເພື່ອຊື້ລົດໃໝ່ ເປັນເວລາ ທີ່ແນ່ນອນ ສະນັ້ນ ສັນຍາທີ່ **ກ** ແລະ **ຂ** ຕົກລົງກັນນັ້ນຍັງບໍ່ທັນມີຜົນສັກສິດເທື່ອ. 2. **ເວລາທີ່ພາໃຫ້ນິຕິກຳສິ້ນສຸດ:** **ກ** ເຕະບານລົ້ມ ແຂ່ງຫັກ ຕ້ອງໄດ້ໃສ່ເຝືອກ ແລະ **ກ** ຮູ້ວ່າ **ຂ** ມີໄມ້ຄ້ຳແຂວນ ຈຶ່ງຢືມໄມ້ຄ້ຳແຂວນຈາກ **ຂ** ຊຶ່ງ ກໍສັນຍາວ່າ ມື້ໃດທີ່ຖອດເຝືອກ ແລະ ຂາດີແລ້ວ ຈຶ່ງສົ່ງໄມ້ຄ້ຳແຂວນດັ່ງກ່າວ. ກໍລະນີນີ້ ຖືວ່າ ວັນເວລາ ທີ່ຖອດເຝືອກ ແລະ ຂາທີ່ຫັກຂອງ **ກ** ດີຂຶ້ນແລ້ວ ເປັນເວລາອັນແນ່ນອນ ແລະ ສັນຍາຢືມຊັບສິ່ງຂອງໄປໃຊ້ກໍສິ້ນສຸດລົງ. 3. **ເວລາທີ່ພາໃຫ້ນິຕິກຳສິ້ນສຸດ:** ໃນວັນທີ 1 ມັງກອນ 2017 **ກ** ເຮັດສັນຍາຂາຍຝາກລົດກະບະກັບ **ຂ** ແລະ ສັນຍາວ່າ ວັນທີ 1 ມັງກອນ 2020 ຈະມາຊື້ລົດກະບະນີ້ຄືນ, ແຕ່ເມື່ອຮອດກຳນົດເວລາແລ້ວ **ກ** ບໍ່ມາຊື້ຄືນລົດກະບະດັ່ງກ່າວ **ຂ** ກໍສາມາດເປັນເຈົ້າກຳມະສິດລົດຄັນນັ້ນໄດ້ ຍ້ອນວ່າເວລາທີ່ກຳນົດໄວ້ໄດ້ການໄປແລ້ວ ແລະ ເຮັດໃຫ້ສັນຍາຂາຍຝາກສິ້ນສຸດລົງ, ເບິ່ງມາດຕາ 427 ຂອງປະມວນກົດໝາຍແພ່ງ
ເຫດຜົນໃນສ້າງໃໝ່	ມາດຕານີ້ສ້າງຂຶ້ນໃໝ່ ຍ້ອນວ່າກົດໝາຍໃນປັດຈຸບັນ, ໂດຍສະເພາະກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ປີ 2008, ບໍ່ໄດ້ກຳນົດກ່ຽວການນຳໃຊ້ "ເວລາທີ່ແນ່ນອນ" ເປັນເງື່ອນໄຂຂອງນິຕິກຳ ທີ່ພາໃຫ້ນິຕິກຳມີຜົນສັກສິດ ຫຼື ສິ້ນສຸດ, ແຕ່ໃນພາກປະຕິບັດຈິງ ການເອົາເວລາທີ່ແນ່ນອນມາເປັນເງື່ອນໄຂຂອງການເຮັດໃຫ້ນິຕິກຳມີຜົນສັກສິດ ຫຼື ສິ້ນສຸດນັ້ນ ຍັງມີຢູ່ໃນສັງຄົມ ສະນັ້ນ ປະມວນກົດໝາຍແພ່ງຈຶ່ງຮັບຮູ້ ແລະ ກຳນົດຫຼັກການນີ້. ເຄື່ອງໝາຍສຳຄັນຂອງການນຳໃຊ້ເວລາໃດໜຶ່ງທີ່ແນ່ນອນເປັນເງື່ອນໄຂຂອງນິຕິກຳມີຄື: - ເວລາ ຕ້ອງເປັນເວລາ ທີ່ຈະເກີດຂຶ້ນໃນອະນາຄົດ ບໍ່ແມ່ນເວລາທີ່ຜ່ານມາແລ້ວ;

	- ເວລາ ຕ້ອງເປັນເວລາ ທີ່ແນ່ນອນ; - ເວລາ ຕ້ອງເປັນເວລາ ຜູ້ເຮັດນິຕິກຳ ຕົກລົງເຫັນດີນຳກັນ. **ການນຳໃຊ້ເວລາອັນແນ່ນອນເປັນເງື່ອນໄຂຂອງນິຕິກຳສາມາດແຍກອອກ ເປັນສອງລັກສະນະຄື:** - ກໍລະນີທີ່ບໍ່ເຖິງເວລາທີ່ແນ່ນອນນັ້ນເທື່ອ, ຜູ້ທີ່ມີສິດ ແລະ ພັນທະຕາມນິຕິກຳ ຍັງບໍ່ສາມາດທວງ ຫຼື ທ້ວງໃຫ້ປະຕິບັດເທື່ອ ຍ້ອນເວລາທີ່ແນ່ນອນທີ່ຕົກລົງກັນ ນັ້ນ ຍັງບໍ່ໄດ້ຜ່ານໄປເທື່ອ ເຊັ່ນໃນຕົວຢ່າງ 1 ຖ້າຫາກ ຍັງບໍ່ກາຍກຳນົດເວລາ ທີ່ຕົກລົງກັນ **ຂ** ກໍບໍ່ສາມາດທວງໄດ້ເທື່ອ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 127-137 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ; ມາດຕາ 182-190 ຂອງປະມວນກົດໝາຍແພ່ງ ແລະ ພານິດຂອງ ໄທ; ມາດຕາ 158-163 ຂອງປະມວນກົດໝາຍແພ່ງເຢຍລະມັນ; ມາດຕາ 1168-1184 ຂອງປະມວນກົດໝາຍແພ່ງຝຣັ່ງ; ມາດຕາ 325-331 ຂອງປະມວນກົດໝາຍແພ່ງກຳປູເຈຍ.
ມາດຕາອ້າງອີງ	ມາດຕາ 427 ຂອງປະມວນກົດໝາຍແພ່ງ
ຂໍ້ມູນອື່ນ	ສືບຕໍ່ຄົ້ນຄວ້າ.

ໝວດທີ 4
ການຕາງໜ້າ

ມາດຕາ 31 ການຕາງໜ້າ

ການຕາງໜ້າ ແມ່ນ ການທີ່ບຸກຄົນໃດໜຶ່ງ ຊຶ່ງເອີ້ນວ່າ "ຜູ້ຕາງໜ້າ" ເຄື່ອນໄຫວ ກັບບຸກຄົນທີສາມ ໃນນາມ ແລະ ເພື່ອຜົນປະໂຫຍດ ຂອງ "ຜູ້ຖືກຕາງໜ້າ".

ການຕາງໜ້າປະກອບດ້ວຍການຕາງໜ້າຕາມກົດໝາຍແລະການຕາງໜ້າຕາມສັນຍາ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ຄວາມໝາຍ ຂອງການຕາງໜ້າ, ການເຮັດນິຕິກຳ ຂອງຜູ້ຕາງໜ້າ ກັບບຸກຄົນທີສາມພາໃຫ້ເກີດສິດ, ພັນທະ ແລະ ຜົນຕໍ່ຜູ້ຖືກຕາງໜ້າໂດຍກົງ. ເພື່ອກຳນົດໃຫ້ເຫັນວ່າ ການເຮັດນິຕິກຳໃດໜຶ່ງນັ້ນ ນອກຈາກຄູ່ກໍລະນີ ທີ່ກ່ຽວຂ້ອງເຮັດດ້ວຍຕົນເອງແລ້ວ ຍັງສາມາດມອບໃຫ້ຜູ້ຕາງໜ້າເຮັດແທນຕົນ ກໍໄດ້. ພ້ອມກັນນັ້ນ, ຍັງບົ່ງບອກໃຫ້ຮູ້ວ່າ ການຕາງໜ້າ ມີທັງການຕາງໜ້າຕາມ ກົດໝາຍ ແລະ ການຕາງໜ້າຕາມສັນຍາ ຊຶ່ງໄດ້ກຳນົດລະອຽດຢູ່ມາດຕາ 32 ແລະ 33 ຂອງປະມວນກົດໝາຍແພ່ງ.

ຕົວຢ່າງ	ໃນວັນທີ 13 ກໍລະກົດ 2014 **ກ** ໄດ້ມອບສິດໃຫ້ **ຂ** ໄປຊື້ສິດນຳໃຊ້ທີ່ດິນນຳ **ຄ** ຢູ່ບ້ານ **ງ**, ເມືອງ **ຈ**, ແຂວງ **ສ. ຂ ເປັນຜູ້ຕາງໜ້າ** ໃຫ້ເບິ່ງຕົວຢ່າງ ໃນມາດຕາ 32 ແລະ 33 ຂອງບົດອະທິບາຍປະມວນກົດ ໝາຍແພ່ງ
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກມາດຕາ 88 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ປີ 2012 ເພາະວ່າຜ່ານມາ ຍັງມີຄວາມເຂົ້າໃຈປົນເປກັນ ລະຫວ່າງ ການເປັນຕົວແທນ, ການມອບໝາຍ ແລະ ການຕາງໜ້າ. ສະນັ້ນ, ຈຶ່ງຈຳເປັນຕ້ອງໄດ້ກຳນົດມາດຕານີ້ຂຶ້ນໃນປະມວນກົດໝາຍແພ່ງເພື່ອອະທິບາຍ ແລະ ຈຳແນກໃຫ້ເຫັນ ແລະ ຮູ້ໄດ້ເຖິງຜົນ ແລະ ຄວາມຮັບຜິດຊອບໃນການເຄື່ອນໄຫວວຽກງານຂອງຜູ້ຕາງໜ້າ. ໃນມາດຕານີ້ຜູ້ຕາງໜ້າ (Agent) ໝາຍເຖິງຜູ້ຮັບການຕາງໜ້າ ເພື່ອໃຫ້ເຄື່ອນໄຫວໃນນາມ ຜູ້ຖືກຕາງໜ້າ (Principal) (ຫຼື ຜູ້ມອບສິດ) .
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 99 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ; ມາດຕາ 1984 ຂອງປະມວນກົດໝາຍແພ່ງຝຣັ່ງ.
ມາດຕາອ້າງອີງ	ມາດຕາ 32, 33, 36, 37, 40, 41 ຂອງປະມວນກົດໝາຍແພ່ງ; ມາດຕາ 88 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ປີ 2012.
ຂໍ້ມູນອື່ນ ຫຼື ປະເພນີສານ	ມາດຕານີ້ຄະນະຮ່າງປະມວນກົດໝາຍແພ່ງ ໄດ້ຊອກຫາຄຳສັບ ເພື່ອອະທິບາຍຄວາມໝາຍຂອງການຕາງໜ້າໃນນີ້ ລວມທັງຄຳສັບ ຜູ້ຖືກຕາງໜ້າ ແລະ ຜູ້ຕາງໜ້າ. ຜ່ານມາໄດ້ນຳໃຊ້ຫຼາຍຄຳສັບ ເຊັ່ນ ເຈົ້າການ, ຜູ້ມອບສິດ ແຕ່ເຫັນວ່າບໍ່ສອດຄ່ອງ ຜ່ານການປຶກສາຫາລື ແລະ ປະກອບຄຳເຫັນ ຈຶ່ງເຫັນດີໃຊ້ຄຳວ່າ ຜູ້ຖືກຕາງໜ້າ ຊຶ່ງໝາຍເຖິງຜູ້ມອບສິດ ແລະ ຜູ້ຕາງໜ້າ ໝາຍເຖິງ ຜູ້ຮັບມອບສິດ.

ມາດຕາ 32 ການຕາງໜ້າຕາມກົດໝາຍ

ການຕາງໜ້າຕາມກົດໝາຍ ແມ່ນການຕາງໜ້າ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການຫຼື ຕາມການແຕ່ງຕັ້ງຂອງອົງການທີ່ມີສິດອຳນາດ ບົນພື້ນຖານກົດໝາຍ.

ຜູ້ຕາງໜ້າຕາມກົດໝາຍ ອາດແມ່ນ ພໍ່ແມ່, ຜູ້ປົກຄອງ, ຜູ້ຄຸ້ມຄອງ ຫຼືບຸກຄົນອື່ນ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ການປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດ, ຜູ້ເສຍ ຫຼື ຖືກຈຳກັດຄວາມສາມາດທາງດ້ານການປະພຶດ ຜ່ານການຕາງໜ້າຕາມກົດໝາຍ ໂດຍບໍ່ມີການມອບສິດຈາກຜູ້ຖືກຕາງໜ້າ ຫຼື ການຈັດຕັ້ງໃດໜຶ່ງ. ເພື່ອກຳນົດບຸກຄົນທີ່ສາມາດເປັນຜູ້ຕາງໜ້າຕາມກົດໝາຍ.

ຕົວอย่าง	1. **ກ** ເປັນຫົວໜ້າຫ້ອງການຂອງກະຊວງ **ຂ**, **ກ** ເຮັດສັນຍາ ຊື້ຂາຍ ເຄື່ອງໃຊ້ຫ້ອງການ ນຳບໍລິສັດ **ຄ**. 2. **ກ** ແລະ **ຂ** ຄູ່ຜົວເມຍ ມີລູກ 2 ຄົນຄື **ຄ** ແລະ **ງ** ທີ່ຍັງບໍ່ພົ້ນກະສຽນອາຍຸ, **ກ** ແລະ **ຂ** ເປັນຜູ້ຕາງໜ້າຕາມກົດໝາຍໂດຍບໍ່ຈຳເປັນຕ້ອງມີການແຕ່ງຕັ້ງ ຫຼື ມອບສິດໃນການເຮັດນິຕິກຳໃດໜຶ່ງແທນ **ຄ** ແລະ **ງ**. 3. **ຂ** ແລະ **ຄ** ທີ່ຍັງບໍ່ພົ້ນກະສຽນອາຍຸໄດ້ໄປອາໄສຢູ່ນຳ **ກ** ຜູ້ເປັນອ້າຍ, **ຂ** ແລະ **ຄ** ໄປເຂົ້າໂຮງຮຽນ **ກ** ຈະເປັນຜູ້ເຊັນຮັບປະກັນໃນຄຳຮ້ອງຂໍເຂົ້າໂຮງຮຽນ. 4. **ກ** ຖືກສານຕັດສິນປະກາດວ່າເປັນຜູ້ເສຍຄວາມສາມາດທາງດ້ານການປະພຶດ ແລະ ກຳນົດເອົາ **ຄ** ເປັນຜູ້ຄຸ້ມຄອງ ຊຶ່ງເປັນຜູ້ຕາງໜ້າຕາມກົດໝາຍ ໃນການເຮັດນິຕິກຳແທນ **ກ.** 5. **ກ** ພະນັກງານຂອງອົງການ **ຂ** ໄດ້ຂັບຂີ່ລົດຂອງອົງການດັ່ງກ່າວໄປປະຊຸມ ເວລາຈອດລົດໄວ້ໄດ້ມີລົດຂອງ **ຄ** ເຂົ້າມາຕຳ ເຮັດໃຫ້ລົດດັ່ງກ່າວເສຍຫາຍ ຕໍ່ຄວາມເສຍຫາຍດັ່ງກ່າວ **ງ** ຜູ້ຄຸ້ມຄອງຊັບສົມບັດຂອງອົງການດັ່ງກ່າວ ໄປຮຽກຮ້ອງຄວາມເສຍຫາຍແທນອົງການ **ຂ**.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງຍ້ອນວ່າໄລຍະຜ່ານມາ ຍັງບໍ່ທັນໄດ້ກຳນົດລະອຽດໄວ້ໃນກົດໝາຍ. ອີງຕາມ ມາດຕາ 68 ວັກທີ 4 ກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ປີ 2008 ໄດ້ກຳນົດໄວ້ກ່ຽວກັບການມອບ ການຕາງໜ້າ ຄ້າຍຄືກັບການຕາງໜ້າຕາມກົດໝາຍ ໂດຍບໍ່ມີການມອບສັນທະ. ນອກຈາກນີ້ ມາດຕາ 88 ແລະ 89 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ໄດ້ກຳນົດກ່ຽວກັບການຕາງໜ້າໃນການດຳເນີນຄະດີແພ່ງ ຊຶ່ງມີລັກສະນະເປັນການຕາງໜ້າຕາມກົດໝາຍ. ບຸກຄົນອື່ນທີ່ໄດ້ກຳນົດໄວ້ໃນວັກທີ 2 ຂອງມາດຕານີ້ ເຊັ່ນ ຜົວ ຫຼື ເມຍ, ຜູ້ຄຸ້ມຄອງມູນມໍຣະດົກ. ຜົວ ຫຼື ເມຍ ຈະເປັນຜົວ ຫຼື ເມຍກໍໄດ້ ໃນເວລາຜົວບໍ່ຢູ່ ຫຼື ບໍ່ສາມາດເຂົ້າຮ່ວມໃນວຽກງານໃດໜຶ່ງຈະແມ່ນເມຍເປັນຜູ້ຕາງໜ້າໄດ້ ເຊັ່ນ ການເຂົ້າຮ່ວມໃນການດຳເນີນຄະດີ ເປັນຜູ້ປົກປ້ອງ ຫຼື ຮ້ອງຂໍຄ່າເສຍຫາຍທາງແພ່ງ ຫຼື ກົງກັນຂ້າມ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 140 ແລະ 141 ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2005; ມາດຕາ 136 ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2015.
ມາດຕາອ້າງອີງ	ມາດຕາ 88, 89 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ປີ 2012; ມາດຕາ 78, 95 ວັກທີ 1 ຂໍ້ 1, ແລະ ຂໍ້ 4, 219 ວັກທີ 2, 215, 223 ວັກທີ 2, 161 ວັກທີ 2, 599, 620, 623 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	

ມາດຕາ 33 ການຕາງໜ້າຕາມສັນຍາ

ການຕາງໜ້າຕາມສັນຍາແມ່ນການທີ່ບຸກຄົນໃດໜຶ່ງໄດ້ຮັບສິດ ແລະ ພັນທະຈາກຜູ້ຖືກຕາງໜ້າໃຫ້ເປັນຜູ້ຕາງໜ້າ ເຮັດນິຕິກຳ ຫຼື ກະທຳສິ່ງໃດໜຶ່ງ ກັບບຸກຄົນທີ່ສາມຕາມສັນຍາ.

ຈຸດປະສົງ	ເພື່ອປົກປ້ອງສິດ ແລະ ຜົນປະ�โຫຍດຂອງ "**ຜູ້ຖືກຕາງໜ້າທີ່ໄດ້ມອບສິດໃຫ້ຜູ້ຕາງໜ້າ ເຮັດນິຕິກຳໃດໜຶ່ງກັບບຸກຄົນທີສາມ**" ຕາມທີ່ໄດ້ຕົກລົງກັນໄວ້ໃນສັນຍາ. ເພື່ອກຳນົດໃຫ້ເຫັນໃນກໍລະນີທີ່ເປັນຜູ້ຕາງໜ້າໄດ້ກໍຕໍ່ເມື່ອໄດ້ຮັບສິດໃນການຕາງໜ້າ ບົນພື້ນຖານຂອງສັນຍາ ລະຫວ່າງ ຜູ້ຖືກຕາງໜ້າ ກັບ ຜູ້ຕາງໜ້າ.
ຕົວຢ່າງ	**ກ** ໄດ້ເຮັດສັນຍາມອບສິດໃຫ້ **ຈ** ໄປເຮັດສັນຍາຊື້ຂາຍ ສິດນຳໃຊ້ທີ່ດິນກັບ **ຄ** ຈຳນວນ 2 ເຮັກຕາ, ມູນຄ່າ 300.000.000 ກີບ ເພື່ອເຮັດຟາມໝູ. ສະນັ້ນ, **ຈ** ສາມາດເຮັດສັນຍາ ກັບ **ຄ** ຕາມຂອບເຂດສັນຍາລະຫວ່າງ **ກ** ແລະ **ຈ** ລະບຸໄວ້.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 68 ກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ປີ 2008 ກຳນົດກ່ຽວກັບ ສັນຍາມອບໝາຍ. ສ່ວນການກຳນົດໃນປະມວນກົດໝາຍແພ່ງ ເພື່ອປົກປ້ອງສິດ ແລະ ຜົນປະ�โຫຍດຂອງຜູ້ຖືກຕາງໜ້າ ໃນເວລາມອບໃຫ້ຜູ້ຕາງໜ້າເຮັດນິຕິກຳ ກັບບຸກຄົນທີ່ສາມຕາງຕົນ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 142 ຂອງປະມວນກົດໝາຍແພ່ງຫວຽດນາມ.
ມາດຕາອ້າງອີງ	ມາດຕາ 446 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 34 ເງື່ອນໄຂແລະຜົນຂອງນິຕິກຳຕໍ່ຜູ້ຖືກຕາງໜ້າ

ນິຕິກຳທີ່ເຮັດຂຶ້ນໂດຍຜູ້ຕາງໜ້າຈະມີຜົນຕໍ່ຜູ້ຖືກຕາງໜ້າ ກໍຕໍ່ເມື່ອຜູ້ຕາງໜ້າ ຫາກມີສິດຕາງໜ້າ ແລະ ໄດ້ແຈ້ງໃຫ້ບຸກຄົນທີສາມຮູ້ວ່າຕົນເປັນຜູ້ຕາງໜ້າ ເຮັດນິຕິກຳ ເພື່ອຜູ້ຖືກຕາງໜ້າ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນເງື່ອນໄຂທີ່ຈະເຮັດໃຫ້ຜົນຂອງນິຕິກຳທີ່ເຮັດຂຶ້ນລະຫວ່າງຜູ້ຕາງໜ້າ ກັບ ບຸກຄົນທີສາມນັ້ນ ມີຜົນໂດຍກົງຕໍ່ຜູ້ຖືກຕາງໜ້າ.

ຕົວอย่าง	**ຄ** ໄດ້ເຮັດສັນຍາມອບສິດໃຫ້ **ມ** ໄປສັ່ງຊື້ລົດນຳບໍລິສັດ **ສ** ໂດຍບົ່ງບອກຍີ່ຫໍ້, ສີ, ແຮງຈັກ, ຜະລິດປີໃດມູນຄ່າທີ່ຕ້ອງຈ່ຍໃນເວລາຊື້ລົດ **ມ** ກໍໄດ້ແຈ້ງໃຫ້ **ສ** ຮູ້ແລ້ວວ່າມາໃນນາມຜູ້ຕາງໜ້າ ໃນກໍລະນີມີການລະເມີດສັນຍາ ຫຼື ລະເມີດການຊຳລະ **ຄ** ຈະເປັນຜູ້ຮັບຜິດຊອບ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງໃໝ່ຍ້ອນວ່າກົດໝາຍປັດຈຸບັນ ຍັງບໍ່ໄດ້ກຳນົດຜົນຂອງນິຕິກຳທີ່ເຮັດຂຶ້ນ ໂດຍຜູ້ຕາງໜ້າ ຕໍ່ຜູ້ຖືກຕາງໜ້າໄວ້ ແຕ່ພາກປະຕິດຕົວຈິງໃນສັງຄົມ ມີຄົນບໍ່ດີໄດ້ແອບອ້າງ ຫຼື ຕົວະຍົວະຫຼອກຫຼວງ ວ່າຕົນເອງເປັນຜູ້ຕາງໜ້າ ໃຫ້ແກ່ບຸກຄົນ ຫຼື ບໍລິສັດໃດໜຶ່ງ ແລ້ວເຮັດນິຕິກຳຂຶ້ນເພື່ອສ້າງຜົນປະໂຫຍດໃຫ້ແກ່ຕົນເອງ ຫຼື ບຸກຄົນອື່ນ. ສະນັ້ນ, ເວລາເກີດມີຂໍ້ຂັດແຍ່ງອົງການທີ່ກ່ຽວຂ້ອງ ສາມາດນຳໃຊ້ມາດຕາດັ່ງກ່າວແກ້ໄຂບັນຫາດັ່ງກ່າວ ຖືກຕ້ອງຕາມຄວາມເປັນຈິງ ແລະ ຖືກຕ້ອງຕາມກົດໝາຍ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 99 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 31, 35 ແລະ 41 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ຜ່ານການຄົ້ນຄວ້າ ໃນເບື້ອງຕົ້ນ ແມ່ນກຳນົດແຕ່ຜົນຂອງນິຕິກຳຕໍ່ຜູ້ຖືກຕາງໜ້າ ເມື່ອຜ່ານການປຶກສາຫາລືກັນ ແລະ ຄົ້ນຄວ້າເນື້ອໃນຂອງມາດຕາດັ່ງກ່າວແລ້ວ ບໍ່ພຽງແຕ່ມີຜົນ ແຕ່ຍັງມີເງື່ອນໄຂ. ດັ່ງນັ້ນ, ຈຶ່ງກຳນົດວ່າ ເງື່ອນໄຂ ແລະ ຜົນຂອງນິຕິກຳທາງແພ່ງຕໍ່ຜູ້ມອບສິດໃສ່ນຳກັນ.

ມາດຕາ 35 ນິຕິກຳ ທີ່ສ້າງຂຶ້ນໂດຍອອກຊື່ຂອງຜູ້ຕາງໜ້າ

ໃນກໍລະນີ ຜູ້ຕາງໜ້າຫາກໄດ້ເຮັດນິຕິກຳ ກັບບຸກຄົນທີສາມ ໂດຍອອກຊື່ຂອງຕົນເອງ ແລະ ບໍ່ໄດ້ແຈ້ງເຈດຈຳນົງໃນການຕາງໜ້າ ຖືວ່າການເຮັດນິຕິກຳ ດັ່ງກ່າວແມ່ນເພື່ອຕົນເອງ ເວັ້ນເສຍແຕ່ ບຸກຄົນທີສາມ ຫາກຮູ້ຫຼືສາມາດຮູ້ໄດ້ວ່າຜູ້ຕາງໜ້າເຮັດນິຕິກຳ ໃນນາມຜູ້ຖືກຕາງໜ້າ.

ຈຸດປະສົງ	ເພື່ອກຳນົດການປົກປ້ອງຜົນປະໂຫຍດຂອງບຸກຄົນທີສາມທີ່ຄິດວ່າຜູ້ຕາງໜ້າເອງ ແມ່ນຄູ່ສັນຍາຍ້ອນສັນຍາໄດ້ອອກຊື່ຂອງຜູ້ຕາງໜ້າເອງ.
ຕົວอย่าง	**ກ** (ຜູ້ຖືກຕາງໜ້າ)ໄດ້ມອບໝາຍໃຫ້ **ຂ** ເປັນຜູ້ຕາງໜ້າໄປເຮັດສັນຍາສັ່ງຊື້ ລົດນຳບໍລິສັດ **ຄ** (ບຸກຄົນທີສາມ) ຈຳນວນ 20 ຄັນ ມູນຄ່າ 1.000.000 ໂດລາສະຫະລັດ ກັບ ບໍລິສັດ **ຄ** ແຕ່ເວລາເຮັດສັນຍາສັນຍາ **ຂ** (ຜູ້ຕາງໜ້າ) ບໍ່ໄດ້ແຈ້ງໃຫ້ **ຄ** ຮູ້ວ່າຕົນເອງເປັນຜູ້ຕາງໜ້າໃຫ້ **ກ** ແລະ ໃນສັນຍາພັດຂຽນຊື່ຕົນເອງເປັນຜູ້ຊື້ ແລະ ບໍລິສັດ **ຄ** ກໍບໍ່ຮູ້ວ່າ **ຂ** ເປັນຜູ້ຕາງໜ້າ **ກ**. ໃນກໍລະນີມີການລະເມີດ **ຂ** ຈະເປັນຜູ້ຮັບຜິດຊອບເອງ. ໃນກໍລະນີນີ້ **ຄ** ຫາກບໍ່ໄດ້ຮັບແຈ້ງຈາກ **ຂ** ວ່າຜູ້ກ່ຽວມາເຊັນສັນຍາ ໃນນາມ **ກ** ແລະ **ຄ** ບໍ່ຮູ້ວ່າ ເປັນຜູ້ຕາງໜ້າ **ກ**, ສັນຍາທີ່ໄດ້ເຊັນກັນນັ້ນມີຜົນກັບ **ຄ** ເອງ.

ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງໃໝ່ຍ້ອນວ່າກົດໝາຍປັດຈຸບັນບໍ່ໄດ້ກຳນົດກ່ຽວກັບບັນຫານີ້ ກໍ່ເພື່ອເປັນການແກ້ໄຂບັນຫາເກີດຂຶ້ນ ຫຼື ອາດຈະເກີດຂຶ້ນໃນອານາຄົດ ທັງເປັນບ່ອນອີງໃນການແກ້ໄຂບັນນີ້ໄດ້ຢ່າງຖືກຕ້ອງ. ມາດຕານີ້ສ້າງຂຶ້ນບົນພື້ນຖານການສຶກສາຄົ້ນຄວ້າປະມວນກົດໝາຍແພ່ງຂອງຕ່າງປະເທດ ແລະ ເພື່ອເປັນການແກ້ໄຂບັນຫາເກີດຂຶ້ນ ຫຼື ອາດຈະເກີດຂຶ້ນໃນອານາຄົດ ທັງເປັນບ່ອນອີງໃນການແກ້ໄຂບັນນີ້ໄດ້ຢ່າງຖືກຕ້ອງ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 100 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 31 ແລະ 34 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 36 ສິດ ແລະ ພັນທະຂອງຜູ້ຕາງໜ້າ

ຜູ້ຕາງໜ້າ ມີສິດ ແລະ ພັນທະ ຕາມສັນຍາ ຫຼື ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ຜູ້ຕາງໜ້າບໍ່ມີສິດເຮັດນິຕິກຳກັບຕົນເອງຫຼື ກັບບຸກຄົນທີສາມ ທີ່ຕົນມີຜົນປະໂຫຍດຮ່ວມນຳ ຫຼື ເປັນຜູ້ຕາງໜ້າໃຫ້ບຸກຄົນທີສາມນີ້.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນວ່າ ຜູ້ຕາງໜ້າມີ ສິດ-ພັນທະ ຕາມສັນຍາ ຫຼື ຕາມທີ່ກຳນົດໄວ້ໃນກົດໝາຍ. ພ້ອມດຽວກັນນັ້ນ, ກໍເຮັດໃຫ້ຮູ້ວ່າຜູ້ຕາງໜ້າບໍ່ສາມາດເຄື່ອນໄຫວໃນກໍລະນີທີ່ນິຕິກຳທີ່ເຮັດນັ້ນມີຜົນກ່ຽວຜົນປະໂຫຍດຂອງຜູ້ຕາງໜ້າເອງ ຫຼື ຜູ້ຕາງໜ້າມີຜົນປະໂຫຍດຮ່ວມກັບບຸກຄົນທີສາມທີ່ຮ່ວມເຮັດນິຕິກຳນັ້ນ.
ຕົວຢ່າງ	**ກ** (ຜູ້ຖືກຕາງໜ້າ)ໄດ້ມອບສິດໃຫ້ **ຂ** (ຜູ້ຕາງໜ້າ) ໄປເຮັດສັນຍາເຊົ່າຄອນโดมินຽມ 3 ຫ້ອງກັບ **ຄ** ໃນມູນຄ່າບໍ່ເກີນ 2.000 ໂດລາສະຫະລັດຕໍ່ຫ້ອງ ຕໍ່ປີ ເພື່ອເຮັດຫ້ອງການແຕ່ຄອນโดมินຽມດັ່ງກ່າວບໍ່ແມ່ນ ກຳມະສິດຂອງ **ຂ** ຫລື **ຂ** ມີກຳມະສິດຮ່ວມຢູ່ນຳ. **ກ** ມີສິດ ແລະ ພັນທະ ຕາມສັນຍາທີ່ຜູ້ຖືກຕາງໜ້າມອບໃຫ້ເທົ່ານັ້ນ ຄື **ຂ** ມີສິດພຽງແຕ່ເຮັດສັນຍາເຊົ່າຄອນโดมินຽມ 3 ຫ້ອງໃນມູນຄ່າ 2.000 ໂດລາສະຫະລັດຕໍ່ຫ້ອງ ຕໍ່ປີເທົ່ານັ້ນ ແລະ **ຂ** ມີພັນທະໃນການແຈ້ງໃຫ້ **ຄ** ບຸກຄົນທີ່ສາມຮູ້ວ່າຕົນເອງເປັນຜູ້ຕາງໜ້າ **ກ** ແລະ ພາຍຫຼັງເຮັດສັນຍາແລ້ວຕ້ອງລາຍງານຜົນຂອງການເຮັດສັນຍານັ້ນໃຫ້ **ກ** (ຜູ້ມອບສິດຮັບຊາບ). **ຂ** ບໍ່ມີສິດເປັນຜູ້ຕາງໜ້າໄປເຊົ່າ ຖ້າ **ຂ** ເປັນເຈົ້າຂອງ ຄອນโดมินຽມດັ່ງກ່າວ ຫຼື ມີຜົນປະໂຫຍດຮ່ວມນຳ ຫຼື ເປັນຜູ້ຕາງໜ້າໃຫ້ເຈົ້າຂອງຄອນโดมินຽມດັ່ງກ່າວ ຖ້າໄປເຊົ່າສັນຍາເຊົ່າດັ່ງກ່າວກໍບໍ່ມີຜົນຕໍ່ **ກ** (ຜູ້ຖືກຕາງໜ້າ)

ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກມາດຕາ 69 ຂອງກົດໝາຍວ່າຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ປີ 2008 ໃນພາກປະຕິບັດຕົວຈິງຜ່ານມາໄດ້ໝູນໃຊ້ມາດຕາດັ່ງກ່າວ ແຕ່ເຫັນວ່າຄວາມໝາຍຂອງມາດຕານີ້ຍັງບໍ່ແຫດເໝາະກັບການຕາງໜ້າ ຈຶ່ງນຳມາປັບໃໝ່ໃຫ້ແຈ້ງຕື່ມກ່ຽວກັບສິດຂອງຜູ້ຕາງໜ້າ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 144 ຂອງປະມວນກົດໝາຍແພ່ງຫວຽດນາມ; ມາດຕາ 808, 809 ແລະ 810 ຂອງປະມວນກົດໝາຍແພ່ງ ແລະ ພານິດໄທ; ມາດຕາ 141 ວັກ 1 ແລະ ວັກ 3 ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2015.
ມາດຕາອ້າງອີງ	ມາດຕາ 34, 35, 37 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ໃນສະພາບຄວາມເປັນຈິງໃນການຈັດຕັ້ງປະຕິບັດກົດໝາຍຂໍ້ຜູກພັນໃນກັນຍາ ແລະ ນອກສັນຍາ ມາດຕາ 69 ເຫັນວ່າຍັງ ມີຄວາມສັບສົນລະຫວ່າງ ສິດ ແລະ ພັນທະ ຂອງຜູ້ຕາງໜ້າ ແລະ ຜູ້ມອບໝາຍ ນອກຈາກນີ້ ໃນມາດຕາ 69 ກົດໝາຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ກຳນົດແຕ່ພັນທະ. ດັ່ງນັ້ນ, ໃນປະມວນກົດໝາຍແພ່ງໄດ້ແຍກໃຫ້ເຫັນກ່ຽວກັບ ສິດ ແລະ ພັນທະ ຂອງຜູ້ຕາງໜ້າ.

ມາດຕາ 37 ສິດ ແລະ ພັນທະຂອງຜູ້ຖືກຕາງໜ້າ

ຜູ້ຖືກຕາງໜ້າມີສິດ ແລະ ພັນທະ ຕາມສັນຍາ ຫຼື ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ຈຸດປະສົງ	ເພື່ອກຳນົດໃຫ້ຜູ້ຖືກຕາງໜ້າໄດ້ປະຕິບັດສິດ ແລະ ພັນທະຂອງຕົນໃຫ້ສອດຄ່ອງຕາມທີ່ໄດ້ກຳນົດໄວ້ໃນສັນຍາ ຫຼື ຕາມທີ່ກົດໝາຍກຳນົດໄວ້.
ຕົວຢ່າງ	**1. ກ** (ຜູ້ຖືກຕາງໜ້າ) ໄດ້ມອບສິດໃຫ້ **ຂ** ເປັນຜູ້ຕາງໜ້າໄປເຮັດສັນຍາຊື້ຂາຍ ສິດນຳໃຊ້ທີ່ດິນ ກັບ **ຄ** ຈຳນວນ 5 ເຮັກຕາ ໃນມູນຄ່າ 30.000.000ກີບ. ພາຍຫຼັງ **ຂ** ໄປເຊັນສັນຍາ ຊື້ຂາຍ ກັບ **ຄ** ຕາມທີ່ **ກ** ໄດ້ມອບໝາຍໃຫ້ **ຂ** ແລ້ວ **ກ** ຕ້ອງໄດ້ຮັບເອົາທີ່ດິນຕາມສັນຍາ ແລະ ມີພັນທະຈ່າຍຄ່າທີ່ດິນ ໃຫ້ **ຄ** ຫຼື ມີສິດ ແລະ ພັນທະອື່ນ ຕາມການລົງກັນໃນສັນຍາໃຫ້ **ຂ** ໄປ ເຊັນສັນຍານັ້ນ. **2. ກ** ຜູ້ເປັນພໍ່ ໄດ້ເປັນຜູ້ປົກຄອງຕາມກົດໝາຍ **ຂ** ຍ້ອນ **ຂ** ຍັງບໍ່ພົ້ນກະສຽນ ອາຍຸ ຫຼື ບໍ່ມີຄວາມສາມາດໃນການປະພຶດ ແຕ່ **ຂ** ໄດ້ຮັບການຍົກຊັບເປັນ ທີ່ດິນ ຈາກ ພໍ່ຕູ້ ຫຼາຍເຮັກຕາ ໃນແຕ່ລະປີຕ້ອງໄດ້ເສຍພາສີທີ່ດິນເປັນ ຈຳນວນຫຼາຍພໍສົມຄວນ ໃນເມື່ອມີຄວາມຈຳເປັນ **ກ** ຈຶ່ງໄດ້ແບ່ງຂາຍ ທີ່ດິນຈຳນວນໜຶ່ງ ເພື່ອຈະໄດ້ເງິນມາເສຍພາສີທີ່ດິນ ແລະ ເຮັດຮົ້ວ ໃນ ເມື່ອ **ຂ** ພົ້ນກະສຽນອາຍຸ ໄດ້ຮູ້ວ່າ **ກ** ໄດ້ແບ່ງຂາຍທີ່ດິນ **ຂ** ແລະ **ກ** ຕ້ອງ ໄດ້ຮັບຮູ້ການຂາຍທີ່ດິນຂອງ **ກ** ແລະ ຮັບເອົາຮົ້ວທີ່ **ກ** ໄດ້ໃຊ້ເງິນຂາຍ ດິນນັ້ນສ້າງຂຶ້ນ.

ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກມາດຕາ 70 ຂອງກົດໝາຍວ່າຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ປີ 2008 ໃນພາກປະຕິບັດຕົວຈິງຜ່ານມາໄດ້ໝູນໃຊ້ມາດຕາດັ່ງກ່າວເຫັນວ່າ ຄວາມໝາຍຂອງມາດຕານີ້ບໍ່ແທດເໝາະກັບການຕາງໜ້າ ຈຶ່ງນຳມາປັບໃໝ່ໃຫ້ແຈ້ງຕື່ມກ່ຽວກັບສິດຂອງຜູ້ຖືກຕາງໜ້າ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 820 ຂອງປະມວນກົດໝາຍແພ່ງ ແລະ ພານິດໄທ.
ມາດຕາອ້າງອີງ	ມາດຕາ 446 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ໃນສະພາບຄວາມເປັນຈິງໃນການຈັດຕັ້ງປະຕິບັດກົດໝາຍຂໍ້ຜູກພັນໃນກັນຍາ ແລະ ນອກສັນຍາ ໃນມາດຕາ 70 ເຫັນວ່າ ຍັງມີຄວາມສັບສົນລະຫວ່າງ ສິດ ແລະ ພັນ ຂອງຜູ້ຕາງໜ້າ ແລະ ຜູ້ມອບໝາຍ ນອກຈາກນີ້ ໃນມາດຕາ 70 ກົດໝາຍຂໍ້ຜູກພັນໃນກັນຍາ ແລະ ນອກສັນຍາ ກຳນົດແຕ່ພັນທະ. ດັ່ງນັ້ນ, ໃນປະມວນກົດໝາຍແພ່ງໄດ້ແຍກໃຫ້ເຫັນຢ່າງຈະແຈ້ງກ່ຽວກັບ ສິດ ແລະ ພັນທະ ຂອງຜູ້ມອບສິດ.

ມາດຕາ 38 ຜູ້ຕາງໜ້າແທນ

ຜູ້ຕາງໜ້າຕາມກົດໝາຍ ມີສິດ ແຕ່ງຕັ້ງ ຫຼື ມອບໝາຍຕໍ່ໃຫ້ຜູ້ອື່ນ ເປັນຜູ້ຕາງໜ້າແທນຕົນກໍໄດ້ ແຕ່ຕ້ອງຮັບຜິດຊອບຕໍ່ຜົນການກະທຳຂອງຜູ້ຕາງໜ້າແທນ.

ໃນກໍລະນີ ມີສາເຫດພາວະວິໄສ ທີ່ບໍ່ສາມາດຫຼີກລ່ຽງໄດ້ ຜູ້ຕາງໜ້າຕາມສັນຍາ ມີສິດແຕ່ງຕັ້ງ ຫຼື ມອບໃຫ້ຜູ້ອື່ນເປັນຜູ້ຕາງໜ້າແທນຕົນກໍໄດ້ແຕ່ຕ້ອງແຈ້ງກ່ຽວກັບບຸກຄະລິກກະພາບ, ຄວາມສາມາດ ຂອງຜູ້ຕາງໜ້າແທນໃຫ້ຜູ້ຖືກຕາງໜ້າໃນທັນໃດ ເພື່ອຂໍຄວາມເຫັນດີຈາກຜູ້ກ່ຽວ, ຖ້າບໍ່ດັ່ງນັ້ນ ຜູ້ຕາງໜ້າຕາມສັນຍາ ກໍຈະຮັບຜິດຊອບຕໍ່ຄວາມເສຍຫາຍ ທີ່ເກີດຂຶ້ນແກ່ຜູ້ຖືກຕາງໜ້າ ຍ້ອນການກະທຳ ຂອງຜູ້ຕາງໜ້າແທນນັ້ນ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ວ່າຜູ້ຕາງໜ້າສາມາດແຕ່ງຕັ້ງບຸກຄົນອື່ນ(ຜູ້ຕາງໜ້າແທນ) ໃຫ້ປະຕິບັດໜ້າທີ່ແທນຕົນ ຕາມການຮັບມອບສິດໄດ້ ໃນກໍລະນີ ມີສາເຫດ ພາວະວິໄສ ເຮັດໃຫ້ຜູ້ຕາງໜ້າບໍ່ສາມາດເຮັດດ້ວຍຕົນເອງ ແຕ່ຕ້ອງແຈ້ງ ໃຫ້ຜູ້ຖືກຕາງໜ້າ ຮັບຮອງເຖິງບຸກຄະລິກກະພາບ ແລະ ຄວາມສາມາດຂອງຜູ້ຕາງໜ້າແທນ. ຖ້າຜູ້ຕາງໜ້າບໍ່ແຈ້ງ ໃນກໍລະນີຜູ້ຕາງໜ້າແທນ ສ້າງຄວາມເສຍຫາຍຜູ້ຕາງໜ້າຈະເປັນຜູ້ຮັບຜິດຊອບເອງ.
ຕົວຢ່າງ	1. **ກ** ຜູ້ເປັນພໍ່ **ຂ** ທີ່ຍັງບໍ່ພົ້ນກະສຽນອາຍຸຕໍ່ມາ **ຂ** ໄດ້ຮັບການຍົກຊັບຈາກພໍ່ຕູ້ ແຕ່ຍ້ອນຄວາມຈຳເປັນໃນການໃຊ້ຈ່າຍ ເພື່ອປົກປັກຮັກສາທີ່ດິນຂອງ **ຂ**, **ກ** ຕ້ອງໄດ້ແບ່ງຂາຍທີ່ດິນຂອງ **ຂ** ເພື່ອມາເສຍພາສີທີ່ດິນ ແລະ ເຮັດຮົ້ວອ້ອມໄວ້ ແຕ່ **ກ** ເປັນຄົນບໍ່ຮູ້ໜັງສື ຈຶ່ງໄດ້ແຕ່ງຕັ້ງ **ຄ** ເພື່ອໄປເຮັດສັນຍາຊື້ຂາຍກັບ **ງ** ແທນ. ໃນເມື່ອ **ຄ** ໄດ້

	ເຊັນສັນຍາຊື້ຂາຍກັບ **ງ** ໃນລາຄາຕ່ຳກວ່າປົກກະຕິ ແລ້ວ **ກ** ຕ້ອງໄດ້ຮັບຮູ້ສັນຍາຍ້ອນເວລາມອບໝາຍໃຫ້ **ຄ** ໄປເຊັນສັນຍາບໍ່ໄດ້ຕົກລົງມູນຄ່າຂອງດິນໄວ້. ຕໍ່ຄວາມເສຍຫາຍທີ່ **ຄ** ໄດ້ຂາຍທີ່ດິນລາຄາຖືກກວ່າປົກກະຕິນັ້ນ **ກ** ຕ້ອງຮັບຜິດຊອບຕໍ່ **ຂ**. 2. **ກ** ໄດ້ແຕ່ງຕັ້ງໃຫ້ **ຂ** ເປັນຜູ້ຕາງໜ້າເພື່ອໄປຊອກຫາບໍລິສັດໃດໜຶ່ງພ້ອມເຊັນສັນຍາກ່ຽວກັບການບຸກເບີກທີ່ດິນຈຳນວນ 50 ເຮັກຕາຂອງ **ກ** ດ້ວຍມູນຄ່າເຮັກຕາລະ 20.000.000 ກີບ ພາຍຫຼັງໄດ້ເຊັນສັນຍາໃຫ້ເປັນຜູ້ຕາງໜ້າແລ້ວ **ຂ** ເກີດການເຈັບເປັນຕ້ອງໄດ້ເຂົ້ານອນປິ່ນປົວຢູ່ໂຮງໝໍ ຍ້ອນແນວນັ້ນ **ຂ** ຈຶ່ງໄດ້ແຕ່ງຕັ້ງໃຫ້ **ຄ** ເປັນຜູ້ຕາງໜ້າແທນໃນການຊອກຫາຜູ້ບຸກເບີກ ແລະ ເຊັນສັນຍາແທນພາຍຫຼັງແຕ່ງຕັ້ງແລ້ວ **ຂ** ກໍໄດ້ແຈ້ງໃຫ້ **ກ** ຊາບແລ້ວວ່າ **ຄ** ເປັນຜູ້ທີ່ມີຄວາມສາມາດໃນການເປັນຜູ້ຕາງໜ້າ ແລະ ເປັນຜູ້ທີ່ມີສະຕິສຳປະສັນຍະສົມບູນດີພົ້ນກະສຽນອາຍຸແລ້ວ ບໍ່ເຄີຍກະທຳຜິດທາງອາຍາໃນສະຖານໃດມາກ່ອນ ມີຄວາມອົດທົນບໍລິສຸດສັດຊື່ ໃນເມື່ອ **ຄ** ຫາກຊອກໄດ້ ແລະ ໄດ້ເຊັນສັນຍາກັບບໍລິສັດ **ງ** ຕາມລາຄາ ທີ່ **ກ** ໄດ້ຕົກລົງໃຫ້ **ຂ** ນັ້ນແລ້ວ **ກ** ກໍຕ້ອງໄດ້ປະຕິບັດຕາມສັນຍາ ຍົກເວັ້ນ **ຂ** ຫາກບໍ່ໄດ້ແຈ້ງບຸຄະລິກກະພາບຂອງ **ຄ** ໃຫ້ **ກ** ຊາບ,ຖ້າ **ຄ** ໄປເຊັນສັນຍາກັບ ບໍລິສັດ **ງ** ຫາກມີຄວາມເສຍຫາຍເກີດຂຶ້ນ, ໃນກໍລະນີ **ກ** ຫາກຮັບຮອງເອົາສັນຍາຈະໃຊ້ໄດ້. ຖ້າ **ກ** ບໍ່ຮັບຮອງເອົາ **ຂ** ຕ້ອງເປັນຜູ້ຮັບຜິດຊອບຕໍ່ຄວາມເສຍຫາຍດັ່ງກ່າວ.
ເຫດຜົນໃນການປັບປຸງ	ມາດຕານີ້ໄດ້ປັບປຸງ ແລະ ແຍກອອກຈາກມາດຕາ 69 ຂອງກົດໝາຍວ່າຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ປີ 2008 ຍ້ອນວ່າ ການກຳນົດໃຫ້ຜູ້ຕາງໜ້າສາມາດມອບສິດຕໍ່ໃຫ້ບຸກຄົນອື່ນເຮັດວຽກແທນຕົນຕາມທີ່ໄດ້ຮັບມອບສິດໃຫ້ເປັນຜູ້ຕາງໜ້າໃນກໍລະນີຈຳເປັນກ່ຽວກັບຄວາມຮັບຜິດຊອບສິດ ແລະ ພັນທະ ຊຶ່ງເຮັດໃຫ້ການນຳໃຊ້ຍັງບໍ່ທັນຈະແຈ້ງດີ ແລະຈັດຕັ້ງປະຕິບັດຍາກ. ດັ່ງນັ້ນ, ໃນປະມວນກົດແພ່ງຈຶ່ງໄດ້ແຍກໃຫ້ເຫັນກ່ຽວກັບຜູ້ຕາງໜ້າແທນ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 105 ຂໍ້ທີ 1 ແລະ 106 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 112 ວັກ 2 ຂີດໜ້າ 2 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 39 ສິດ ແລະ ພັນທະຂອງຜູ້ຕາງໜ້າແທນ

ຜູ້ຕາງໜ້າແທນ ມີສິດ ແລະ ພັນທະ ຕໍ່ຜູ້ຖືກາຕາງໜ້າ ແລະ ບຸກຄົນທີສາມຄືກັນກັບຜູ້ຕາງໜ້າ ແລະ ຕ້ອງນຳໃຊ້ສິດ ແລະ ປະຕິບັດພັນທະ ໃນຂອບເຂດທີ່ຜູ້ຕາງໜ້າມອບໃຫ້.

ຈຸດປະສົງ	ເພື່ອກຳນົດໃຫ້ຮັບຮູ້ກ່ຽວກັບຂອບເຂດສິດ ແລະ ພັນທະ ຂອງຜູ້ຕາງໜ້າແທນ ທີ່ມີຄວາມຮັບຜິດຊອບ ໃນການປະຕິບັດໜ້າທີ່ຕາມຂອບເຂດທີ່ຜູ້ຕາງໜ້າ ມອບໃຫ້ຕໍ່ຜູ້ຖືກາຕາງໜ້າ ແລະ ບຸກຄົນທີສາມ
ຕົວຢ່າງ	**ກ** ໃນນາມຜູ້ຕາງໜ້າຂອງບໍລິສັດ **ຂ** ໄປເຮັດສັນຍາກັບບໍລິສັດ **ຄ** ເພື່ອກໍ່ສ້າງສິ່ງ ໃດໜຶ່ງໃນມູນຄ່າ 200.000.000 ກີບ ແຕ່ຮອດມື້ຈະໄປເຮັດສັນຍາ **ກ** ພັດລົ້ມ ປ່ວຍກະທັນຫັນຈົນເຂົ້າໂຮງໝໍຈຶ່ງໄດ້ມອບໃຫ້ **ງ** ໄປເຮັດສັນຍາແທນແທນ. ຈາກຕົວຢ່າງຂ້າງເທິງ **ງ** ຜູ້ຕາງໜ້າແທນມີສິດໄປເຊັນສັນຍາຕາມການມອບ ໝາຍຂອງ **ຂ** ຄື ການເຊັນສັນຍາແມ່ນບໍ່ໃຫ້ເກີນມູນຄ່າ 200.000.000 ກີບ ແລະ ສັນຍາດັ່ງກ່າວ ກໍຕ້ອງເຊັນກັບບໍລິສັດ **ຄ** ເທົ່ານັ້ນ, **ງ** ມີສິດ ແລະ ພັນທະ ຄືກັນ ກັບ **ກ** (ຜູ້ຖືກາຕາງໜ້າ). ໃນກໍລະນີ **ງ** ເຮັດເກີນຂອບເຂດທີ່ **ກ** ມອບໝາຍໃຫ້ ແລະ ເກີດຄວາມ ເສຍຫາຍ **ງ** ຕ້ອງຮັບຜິດຊອບທັງໝົດ ທີ່ຕົນກໍ່ຂຶ້ນ ແລະ ຜົນຂອງການເຮັດນິຕິ ກຳທີ່ **ງ** ເຮັດກັບບຸກຄົນທີ່ສາມ ແມ່ນມີຜົນໂດຍກົງຕໍ່ຜູ້ຖືກາຕາງໜ້າ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງໃໝ່ຍ້ອນວ່າກົດໝາຍປັດຈຸບັນບໍ່ທັນໄດ້ກຳນົດໄວ້ ແລະ ເພື່ອໃຫ້ ຜູ້ຕາງໜ້າ ສາມາດປະຕິບັດການມອບໝາຍໃນກໍລະນີເກີດເຫດສຸກເສີນສາມາດ ມອບໝາຍໃຫ້ບຸກຄົນໃດໜຶ່ງເປັນຜູ້ຕາງໜ້າແທນ ໄປເຮັດນິຕິກຳກັບບຸກຄົນທີ່ ສາມ.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງ ຂອງປະເທດອື່ນ	ມາດຕາ 106 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 40 ຜົນຂອງນິຕິກຳທີ່ເຮັດຂຶ້ນໂດຍຜູ້ບໍ່ມີສິດເປັນຜູ້ຕາງໜ້າ

ບຸກຄົນໃດ ທີ່ບໍ່ໄດ້ຮັບສິດໃຫ້ເປັນຜູ້ຕາງໜ້າ ຫາກເຮັດນິຕິກຳ ທີ່ພາໃຫ້ເກີດສິດ ແລະ ພັນທະ ແກ່ຜູ້ຖືກາຕາງໜ້າຜູ້ກ່ຽວ ຕ້ອງຮັບຜິດຊອບຕໍ່ນິຕິກຳນັ້ນ ເວັ້ນເສຍແຕ່ ຜູ້ຖືກາຕາງໜ້າ ຫາກເຫັນດີຮັບເອົາ.

ໃນກໍລະນີຜູ້ຖືກຕາງໜ້າຫາກຮູ້ ຫຼືຄວນຮູ້ກ່ຽວກັບການເຮັດນິຕິກຳໃດໜຶ່ງຂອງຜູ້ທີ່ບໍ່ມີສິດເປັນຜູ້ຕາງໜ້າ ແຕ່ບໍ່ທັກທ້ວງຫຼືຄັດຄ້ານຫຼື ໃຫ້ການສະໜັບສະໜຸນ ກໍຖືວ່ານິຕິກຳນັ້ນ ໄດ້ຖືກຮັບເອົາໂດຍຜູ້ຖືກຕາງໜ້າ.ຖ້າມີຄວາມເສຍຫາຍເກີດຂຶ້ນ ຜູ້ຖືກຕາງໜ້າກໍຕ້ອງຮັບຜິດຊອບ.

ຖ້າບຸກຄົນທີສາມຫາກຮູ້ວ່າຕົນໄດ້ເຮັດນິຕິກຳກັບຜູ້ບໍ່ມີສິດເປັນຜູ້ຕາງໜ້າແລ້ວ ສາມາດແຈ້ງເປັນລາຍລັກອັກສອນ ໃຫ້ຜູ້ຖືກຕາງໜ້າຫຼື ຜູ້ບໍ່ມີສິດເປັນຜູ້ຕາງໜ້າ ເພື່ອຂໍໃຫ້ຕອບຕາມເວລາທີ່ຕົນໄດ້ກຳນົດໄວ້. ຖ້າໝົດກຳນົດເວລາດັ່ງກ່າວແລ້ວ ຫາກບໍ່ມີຄຳຕອບ ກໍຖືວ່ານິຕິກຳນັ້ນ ບໍ່ຖືກຮັບຮອງໂດຍ ຜູ້ຖືກຕາງ ໜ້າ. ໃນກໍລະນີນີ້ ບຸກຄົນທີສາມ ສາມາດຍົກເລີກນິຕິກຳນັ້ນໄດ້ຝ່າຍດຽວແລະ ຖ້າມີຄວາມເສຍຫາຍເກີດຂຶ້ນ ກໍມີສິດຮ້ອງຂໍໃຫ້ໃຊ້ແທນ ເວັ້ນເສຍແຕ່ ຜູ້ກ່ຽວຫາກຮູ້ ຫຼື ຄວນຮູ້ໃນເວລາເຮັດນິຕິກຳນັ້ນ.

ຈຸດປະສົງ	ເພື່ອກຳນົດການປ້ອງກັນການແອບອ້າງຂອງບຸກຄົນໃດໜຶ່ງເພື່ອສ້າງສິ່ງໃດໜຶ່ງກັບ ບຸກຄົນທີສາມ. ເພື່ອກຳນົດໃຫ້ເຫັນຜົນສັກສິດ ແລະ ຄວາມຮັບຜິດຊອບຕໍ່ຜົນເສຍຫາຍ ຂອງນິຕິ ກຳ ທີ່ຜູ້ບໍ່ມີສິດໄດ້ເຮັດຂຶ້ນກັບບຸກຄົນທີສາມ. ເພື່ອເຮັດໃຫ້ເຫັນເຖິງກໍລະນີຜູ້ທີ່ບໍ່ມີສິດເປັນຜູ້ຕາງໜ້າຫາກໄດ້ເຄື່ອນໄຫວເຮັດນິ ກຳກັບບຸກຄົນໃດໜຶ່ງ (ບຸກຄົນທີສາມ) ໃນນາມເປັນຜູ້ຕາງໜ້າຂອງຜູ້ຖືກຕາງໜ້າ ນັ້ນ ຜົນຂອງນິຕິກຳທີ່ເຮັດຂຶ້ນຈະເປັນຄືແນວໃດ ແລະ ຜູ້ໃດຄວນຮັບຜິດຊອບ ຂຶ້ນກັບແຕ່ລະກໍລະນີ.
ຕົວຢ່າງ	**ກ** ໄດ້ເຮັດສັນຍາມອບໃຫ້ **ຂ** ເປັນຜູ້ຕາງໜ້າໄປຮັບເອົາເງິນ ຈາກບໍລິສັດ **ຄ** ໄປ ຊອກຊື້ຢາງພາລານຳປະຊາຊົນກິໂລລະ 8.000 ກີບ ເພື່ອມາສົ່ງຂາຍໃຫ້ບໍລິສັດ **ຄ** ກິໂລລະ 9.000 ກີບຕາມສັນຍາທີ່ **ກ** ແລະ **ຄ** ໄດ້ເຊັນກັນໄວ້, ຕໍ່ມາສັນຍາ ທີ່ **ກ** ມອບໃຫ້ **ຂ** ສິດສິ້ນສຸດແຕ່ **ຂ** ຍັງໄປຮັບເອົາເງິນຈາກ **ຄ** ຢູ່ເພື່ອໄປຊື້ໃນ ລາຄາເກົ່າແຕ່ **ຄ** ບໍ່ຊື້ໃນລາຄາ 9.000 ກີບ ອີກຍ້ອນລາຄາຢາງຕົກຕ່ຳ **ຄ** ສາມາດ ຊື້ໄດແຕ່ 7.000 ກີບ ເຮັດໃຫ້ **ຂ** ຫຼຸບທຶນຕໍ່ຄວາມເສຍຫາຍດັ່ງກ່າວ **ຂ** ຕ້ອງ ຮັບຜິດຊອບເອົາເອງເວັ້ນເສຍແຕ່ **ກ** ເຫັນດີວ່າ **ຂ** ໄປຊື້ໃນນາມຕົນເອງ **ກ** ຈຶ່ງມີ ຄວາມຮັບຜິດຊອບ. ໃນຕົວຢ່າງເທິງນີ້ ເວລາທີ່ສັນຍາໝົດ **ຂ** ຍັງໄປຮັບເອົາເງິນແຕ່ **ກ** ຮູ້ວ່າ **ຂ** ໄປ ເອົາເງິນເພື່ອໄປຊື້ຢາງພະລາໃນນາມຕົນແຕ່ບໍ່ໄດ້ທັກທ້ວງ ຫຼື ຄັດຄ້ານ **ຂ** ການໄປຊື້ ຢາງພາລາຂອງ **ຂ** ແມ່ນໃນນາມ **ກ** ເມື່ອເກີດການຫຼຸບທຶນມີຄວາມຮັບຜິດຊອບ. ຖ້າ **ຄ** ຫາກຮູ້ວ່າ **ຂ** ເປັນຜູ້ບໍ່ມີສິດເປັນຜູ້ຕາງໜ້າແລ້ວ **ຄ** ຕ້ອງແຈ້ງແບບເປັນລາຍ ລັກອັກສອນໃຫ້ **ກ** ຫຼື **ຂ** ຮູ້ ແລະໃຫ້ຕອບຕາມກຳນົດເວລາຖ້າ **ກ** ບໍ່ຕອບຖືວ່າ **ກ** ບໍ່ໄດ້ຕົກລົງໃຫ້ **ຂ** ເປັນຜູ້ຕາງໜ້າມາຮັບເງິນໄດ້ອີກແລ້ວ **ຄ** ສາມາດຍົກເລີກ ສັນຍາຊື້ຢາງພາລາຈາກ **ກ** ໄດ້ຝ່າຍດຽວ. ຖ້າ **ຄ** ບໍ່ຮູ້ວ່າສັນຍາເປັນຜູ້ຕາງໜ້າລະຫວ່າງ **ກ** ແລະ **ຂ** ໝົດ **ຄ** ຍັງມອບເງິນໃຫ້ **ຂ** ຢູ່ ແລະ **ຂ** ໄດ້ເຮັດໃຫ້ເງິນດັ່ງກ່າວເສຍຫາຍ **ຄ** ມີສິດຮ້ອງຂໍໃຫ້ໃຊ້ແທນຄ່າ ເສຍຫາຍໄດ້.

	ການເຮັດນິຕິກຳລະຫວ່າງ **ຂ** ກັບບຸກຄົນທີສາມນັ້ນ ຈະມີຜົນທາງດ້ານກົດໝາຍຕໍ່ **ຂ**. ໃນກໍລະນີ **ຂ** ເຫັນດີຮັບຮອງເອົານິຕິກຳທີ່ເຮັດຂຶ້ນນັ້ນ ກໍຖືວ່ານິຕິກຳນັ້ນມີຜົນຕໍ່ **ຂ**.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງໃໝ່ຍ້ອນວ່າໄລຍະຜ່ານມາ ບໍ່ທັນໄດ້ກຳນົດຫຼັກການໄວ້ ແຕ່ພົດຕິກຳຕົວຈິງຂອງສັງຄົມ ພັດເກີດມີຊຶ່ງໄດ້ສ້າງຄວາມເສຍຫາຍໃຫ້ແກ່ຜູ້ຖືກແອບອ້າງ ແລະ ບຸກຄົນທີສາມ ຊຶ່ງບຸກຄົນທີ່ເປັນຜູ້ບໍ່ສິດທີ່ໄດ້ແອບອ້າງວ່າຕົນເອງເປັນຜູ້ຕາງໜ້າໃຫ້ແກ່ຜູ້ໃດໜຶ່ງ ເພື່ອຫວັງຜົນໂຫຍດຂອງຕົນເອງ. ເພື່ອໃຫ້ຮູ້ວ່ານິຕິກຳທີ່ເຮັດຂຶ້ນໂດຍຜູ້ບໍ່ມີສິດເປັນຜູ້ຕາງໜ້າສາມາດໃຊ້ໄດ້ ຫຼືບໍ່ໃຊ້ໄດ້ດ້ວຍສາເຫດໃດແດ່.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 109, 112 ແລະ 113 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ; ມາດຕາ 142 ຂອງປະມວນກົດໝາຍແພ່ງຫວຽດນາມປີ 2015.
ມາດຕາອ້າງອີງ	ມາດຕາ 34 ຂອງປະມວຍກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 41 ຜົນຂອງການເຮັດນິຕິກຳເກີນຂອບເຂດຂອງຜູ້ຕາງໜ້າ

ຜູ້ຕາງໜ້າ ທີ່ເຮັດນິຕິກຳເກີນຂອບເຂດສິດຂອງຕົນຕ້ອງຮັບຜິດຊອບຕໍ່ນິຕິກຳນັ້ນ ເວັ້ນເສຍແຕ່ຜູ້ຖືກຕາງໜ້າ ຫາກເຫັນດີຮັບເອົາ.

ໃນກໍລະນີ ບຸກຄົນທີສາມ ຫາກເຊື່ອຢ່າງມີເຫດຜົນວ່າ ນິຕິກຳ ຊຶ່ງຜູ້ຕາງໜ້າ ເຮັດກັບຕົນນັ້ນຢູ່ໃນຂອບເຂດສິດຂອງການຕາງໜ້າ, ຖືວ່າ ນິຕິກຳ ທີ່ເຮັດຂຶ້ນນັ້ນ ເປັນການຖືກຕ້ອງ.

ຖ້າວ່າບຸກຄົນທີສາມ ຫາກຮູ້ວ່າຕົນໄດ້ເຮັດນິຕິກຳກັບຜູ້ຕາງໜ້າທີ່ເຮັດເກີນຂອບເຂດສິດ ສາມາດແຈ້ງເປັນລາຍລັກອັກສອນໃຫ້ຜູ້ຖືກຕາງໜ້າເພື່ອຂໍຄຳຕອບຕາມເວລາທີ່ໄດ້ກຳນົດໄວ້. ຖ້າໝົດກຳນົດເວລາດັ່ງກ່າວແລ້ວ ຫາກບໍ່ມີຄຳຕອບກຳຖືວ່ານິຕິກຳນັ້ນບໍ່ຖືກຮັບເອົາໂດຍຜູ້ຖືກຕາງໜ້າ. ໃນກໍລະນີນີ້ ບຸກຄົນທີສາມ ສາມາດຍົກເລີກນິຕິກຳນັ້ນໄດ້ຝ່າຍດຽວ ແລະ ຖ້າມີຄວາມເສຍຫາຍເກີດຂຶ້ນ ກໍມີສິດຮ້ອງຂໍໃຫ້ໃຊ້ແທນ ເວັ້ນເສຍແຕ່ ຜູ້ກ່ຽວຫາກຮູ້ ຫຼື ຄວນຮູ້ກ່ຽວກັບບັນຫາດັ່ງກ່າວ.

ໃນກໍລະນີ ຜູ້ຕາງໜ້າ ແລະ ບຸກຄົນທີສາມ ຫາກເຮັດນິຕິກຳ ເກີນຂອບເຂດ ໂດຍເຈດຕະນາ ຊຶ່ງກໍຄວາມເສຍຫາຍໃຫ້ແກ່ຜູ້ຖືກຕາງໜ້າ ພວກກ່ຽວຕ້ອງຮ່ວມກັນຮັບຜິດຊອບ ຕໍ່ຄວາມເສຍຫາຍດັ່ງກ່າວ.

ຈຸດປະສົງ	ເພື່ອເຮັດໃຫ້ເຫັນກໍລະນີຜູ້ຕາງໜ້າໄດ້ນຳໃຊ້ສິດໃນການເປັນຜູ້ຕາງໜ້າຂອງຜູ້ຖືກຕາງໜ້າແລ້ວຜົນຂອງນິຕິກຳດັ່ງກ່າວຈະເປັນຄືແນວໃດ ແລະ ຜູ້ໃດຮັບຜິດຊອບ ແມ່ນຂຶ້ນກັບແຕ່ລະກໍລະນີ.

ຕົວຢ່າງ	**ກ** (ຜູ້ຖືກຕາງໜ້າ) ມອບສິດໃຫ້ **ຂ** (ຜູ້ຕາງໜ້າ) ໄປຊື້ສິດນຳໃຊ້ທີ່ດິນນຳ **ຄ** ຈຳນວນ 5 ເຮັກຕາໃນມູນຄ່າ 500.000 ບາດ ແຕ່ເມື່ອ **ຂ** ເຮັດສັນຍາຊື້-ຂາຍ ຕົວຈິງ **ຄ** (ຜູ້ຕາງໜ້າ) ພັດຕົກລົງ ຊື້ສິດນຳໃຊ້ທີ່ດິນຈຳນວນ 7 ເຮັກຕາໃນມູນຄ່າ 700.000 ບາດ ເນື່ອງຈາກວ່າ **ຄ** ຕ້ອງການຂາຍໝົດບາດດຽວ ຖ້າບໍ່ຊື້ ໝົດ ຈະບໍ່ຂາຍ. ຈາກຕົວຢ່າງຂ້າງເທິງການເຮັດນິຕິກຳລະຫວ່າງ **ຂ** (ຜູ້ຕາງໜ້າ) ກັບ **ຄ** (ບຸກຄົນທີສາມ) ນັ້ນຈະບໍ່ມີຜົນທາງດ້ານກົດໝາຍຕໍ່ **ກ** (ຜູ້ຖືກຕາງໜ້າ) ຖ້າຫາກ **ກ** (ຜູ້ຖືກຕາງໜ້າ) ບໍ່ເຫັນດີຮັບເອົານິຕິກຳດັ່ງກ່າວແຕ່ຖ້າຫາກ **ກ** ເຫັນດີຮັບເອົາ ສັນຍາຊື້-ຂາຍ ທີ່ເຮັດຂຶ້ນນັ້ນ ກໍຖືວ່າ ສັນຍາຊື້-ຂາຍ ທີ່ເຮັດຂຶ້ນນັ້ນ ມີຜົນຕໍ່ **ກ**. ຖ້າ **ກ** ບໍ່ຮັບເອົາຖືວ່າສັນຍາໃຊ້ບໍ່ໄດ້ຍ້ອນ **ຄ** ບໍ່ແບ່ງຂາຍ. ໃນກໍລະນີ **ຄ** (ບຸກຄົນທີສາມ) ຫາກເຊື່ອຢ່າງມີເຫດຜົນວ່າ **ຂ** ໄດ້ເຮັດສັນຍາ ຊື້ ຂາຍທີ່ດິນກັບຕົນນັ້ນຢູ່ໃນຂອບເຂດສິດຂອງຜູ້ຕາງໜ້າຊຶ່ງສັນຍາຊື້ຂາຍທີ່ດິນທີ່ **ຂ** ທີ່ເຮັດຂຶ້ນກັບ **ຄ** ນັ້ນມີຜົນທາງດ້ານກົດໝາຍຕໍ່ **ກ**. ຖ້າ **ກ** ຫາກແຈ້ງ ຕອບເຫັນດີຮັບເອົາພາຍຫຼັງທີ່ **ຄ**ໄດ້ແຈ້ງໃຫ້ **ກ** ແລ້ວ; ແຕ່ໃນກໍລະນີ **ຄ** (ບຸກ ຄົນທີສາມ) ຫາກຮູ້ກ່ອນແລ້ວວ່າ ການທີ່ຕົນເຮັດສັນຍາຊື້-ຂາຍທີ່ດິນ ກັບ **ຂ** (ຜູ້ ຕາງໜ້າ) ນັ້ນແມ່ນເຮັດເກີນຂອບເຂດສິດຂອງ **ຂ** (ຜູ້ຕາງໜ້າ) ແລະ **ຄ** (ບຸກ ຄົນທີ່ສາມ) ສາມາດແຈ້ງເປັນລາຍລັກອັກສອນໃຫ້ແກ່ **ກ** ຖ້າຜູ້ກ່ຽວບໍ່ຕອບ ກໍ ສະແດງວ່າ ສັນຍາຊື້ຂາຍດັ່ງກ່າວບໍ່ມີຜົນທາງດ້ານກົດໝາຍຕໍ່ **ກ** (ຜູ້ຖືກຕາງໜ້າ). ນອກຈາກນີ້ **ຄ** (ບຸກຄົນທີສາມ) ສາມາດຍົກເລີກສັນຍາຊື້-ຂາຍດັ່ງກ່າວ ຝ່າຍ ດຽວໄດ້ ແລະ ຍັງມີສິດຮຽກຮ້ອງຄ່າເສຍຫາຍ.ໃນກໍລະນີ ທີ່ **ຂ** (ຜູ້ຕາງໜ້າ) ກັບ **ຄ** (ບຸກຄົນທີສາມ) ຫາກຮູ້ນຳກັນວ່າ ການເຮັດສັນຍາຊື້- ຂາຍ ນີ້ແມ່ນ ເຮັດເກີນ ຂອບເຂດສິດຂອງຜູ້ຕາງໜ້າ ແຕ່ທັງສອງຍັງເຈດຕະນາປິດບັງ ແລະ ຮ່ວມກັນ ເຮັດຂຶ້ນ, ສັນຍາທີ່ເຮັດຂຶ້ນນັ້ນຈະບໍ່ມີຜົນທາງດ້ານກົດໝາຍຕໍ່ **ກ** ແລະ ພວກ ກ່ຽວຕ້ອງມີຄວາມຮັບຜິດຊອບຄ່າເສຍຫາຍທີ່ອາດເກີດຂຶ້ນ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງໃໝ່ຍ້ອນວ່າຍັງບໍ່ທັນໄດ້ກຳນົດໄວ້ໃນກົດໝາຍ ແຕ່ພົດຕິກຳຕົວຈິງ ຂອງສັງຄົມພັດເກີດມີ ຊຶ່ງສ້າງຄວາມອັບປະໂຫຍດໃຫ້ແກ່ຜູ້ຖືກຕາງໜ້າເມື່ອມີ ຄວາມເສຍຫາຍເກີດຂຶ້ນຜູ້ຕາງໜ້າຫຼືຜູ້ຖືກຕາງໜ້າ ຫຼື ມັກຈະປະຕິເສດຄວາມ ຮັບຜິດຊອບ. ສະນັ້ນ, ການກຳນົດມາດຕານີ້ເຂົ້າໃນປະມວນກົດໝາຍແພ່ງ ແມ່ນ ຈະສາມາດແກ້ໄຂຂໍ້ຂັດແຍ່ງລະຫວ່າງຜູ້ມອບສິດ, ຜູ້ຕາງໜ້າ ແລະ ບຸກຄົນທີ່ສາມ ໃນເວລາມີການກະທຳເກີນສິດອຳນາດໃນການຕາງໜ້າ.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງ ຂອງປະເທດອື່ນ	ມາດຕາ 110, 114, 115 ແລະ 117 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ; ມາດຕາ 143 ຂອງປະມວນແພ່ງຫວຽດນາມ ປີ 2015.
ມາດຕາອ້າງອີງ	ມາດຕາ 40, 161 ວັກ 2 ແລະ 165 ຂອງປະມວນກົດໝາຍແພ່ງ.

ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 42 ການສິ້ນສຸດການຕາງໜ້າ

ການຕາງໜ້າຕາມກົດໝາຍຈະສິ້ນສຸດລົງໃນກໍລະນີ ດັ່ງນີ້:

1. ການປົກຄອງ ຫຼື ການຄຸ້ມຄອງ ໄດ້ສິ້ນສຸດ;
2. ສິດ ແລະ ພັນທະຂອງພໍ່ແມ່ຕໍ່ລູກທີ່ຍັງບໍ່ທັນພົ້ນກະສຽນອາຍຸໄດ້ສິ້ນສຸດ;
3. ຜູ້ຖືກຕາງໜ້າ ຫຼື ຜູ້ຕາງໜ້າ ໄດ້ເສຍຊີວິດ ຫຼື ຖືກຍຸບເລີກ ຫຼື ລົ້ມລະລາຍ;
4. ກໍລະນີອື່ນ ທີ່ກົດໝາຍໄດ້ກຳນົດໄວ້.

ການຕາງໜ້າຕາມສັນຍາ ຈະສິ້ນສຸດລົງໃນກໍລະນີ ດັ່ງນີ້:

1. ສັນຍາການຕາງໜ້າ ໄດ້ສິ້ນສຸດ;
2. ກໍລະນີອື່ນ ທີ່ກົດໝາຍໄດ້ກຳນົດໄວ້.

ຈຸດປະສົງ	ເພື່ອກຳນົດໃຫ້ຮັບຮູ້ກ່ຽວກັບການສິ້ນສຸດການເປັນຜູ້ຕາງໜ້າຕາມກົດໝາຍ ແລະ ຕາມສັນຍາ.
ຕົວຢ່າງ	**1. ກ** ແລະ **ຂ** ມີລູກຮ່ວມກັນ 1 ຄົນ ຊື່ວ່າ **ຄ** ອາຍຸ 14 ປີ ຊຶ່ງຜ່ານມາ **ຄ** ໄດ້ຮັບການຍົກຊັບທີ່ດິນ ແລະ ເງິນຈາກພໍ່ຕູ້ແມ່ຕູ້, **ກ** ແລະ **ຂ** ໄດ້ນຳໃຊ້ຊັບຂອງ **ຄ** ໃນທາງທີ່ບໍ່ເປັນປະໂຫຍດເຊັ່ນ: ເອົາໄປຄ້ຳປະກັນເອົາເງິນມາຫຼິ້ນກິນຟູມເຟືອຍ, ຫຼິ້ນການພະນັນເຮັດໃຫ້ຊັບຂອງ **ຄ** ເສຍຫາຍໄປຈຳນວນໜຶ່ງ. ຍາດພີ່ນ້ອງຈຶ່ງສະເໜີຕໍ່ສານປະຊາຊົນ ໃຫ້ປົດສິດການເປັນຜູ້ປົກຄອງ(ພໍ່ແມ່)ໃນການໃນການຄຸ້ມຄອງຊັບຂອງ **ຄ** ໝາຍຄວາມວ່າສານປະຊົນກໍໄດ້ພິຈາລະນາຕັດສິດການເປັນຜູ້ຕາງໜ້າຂອງພໍ່ ແລະ ແມ່ **ຄ** ໃນການເປັນຜູ້ຕາງໜ້າຕາມກົດໝາຍ. ສະນັ້ນ, **ກ** ແລະ **ຂ** (ພໍ່ແມ່) ກໍສິ້ນສຸດການເປັນຜູ້ຕາງໜ້າງໃຫ້ແກ່ **ຄ** (ລູກ). **2. ກ** ແລະ **ຂ** ພໍ່ແມ່ຂອງ **ງ** ໄດ້ແຕ່ງຕັ້ງໃຫ້ **ຄ** ເປັນຜູ້ປົກຄອງລ້ຽງດູ **ງ** ທີ່ຍັງບໍ່ພົ້ນກະສຽນອາຍຸໃນເວລາທີ່ **ກ** ແລະ **ຂ** ບໍ່ຢູ່ເນື່ອງຈາກວ່າ **ກ** ແລະ **ຂ** ໄດ້ໄປເຮັດວຽກຢູ່ຕ່າງປະເທດເປັນເວລາ 5 ປີ. ໃນເວລາທີ່ **ກ** ແລະ **ຂ** ບໍ່ຢູ່ປູ່ ແລະ ຍ່າຕ້ອງການມອບທີ່ດິນໜຶ່ງຕອນໃຫ້ **ງ** ໃນກໍລະນີນີ້ **ຄ** ຈະເປັນຜູ້ຕາງໜ້າ **ງ** ໃນການຄຸ້ມຄອງຊັບທີ່ເປັນຂອງ **ງ** ແລະ ສາມາດເຮັດສັນຍາຕ່າງໆໃນນາມ **ງ** ໄດ້ ແຕ່ພາຍຫຼັງ **ກ** ແລະ **ຂ** ສິ້ນສຸດພາລະກິດ ແລະ ກັບມາແລ້ວການຕາງໜ້າຂອງ **ຄ** ແມ່ນຈະສິ້ນສຸດລົງຍ້ອນການແຕ່ງຕັ້ງ **ຄ** ໃຫ້ເປັນຜູ້ປົກຄອງ **ງ** ຂອງ **ກ** ແລະ **ຂ** ນັ້ນແມ່ນມີກຳນົດເວລາ ຫຼື ໃນກໍລະນີ **ຄ** ຫຼື **ງ** ຜູ້ໃດໜຶ່ງໄດ້ເສຍຊີວິດການເປັນຜູ້ຄຸ້ມຄອງ ຫຼືເປັນຜູ້ຕາງໜ້າຂອງ **ຄ** ໃນການເຮັດນິຕິກຳແທນງກໍຖືກສິ້ນສຸດ.

	3. **ກ** ແລະ **ຂ** ເປັນພໍ່ແມ່ຂອງ **ຄ** ທີ່ມີອາຍຸ 8 ປີແຕ່ **ກ** ແລະ **ຂ** ບໍ່ໄດ້ເອົາໃຈໃສ່ລ້ຽງດູ **ຄ** ມີການທຸບຕີທໍລະມານ **ຄ** ເກືອບທຸກມື້ ງ ຜູ້ເປັນແມ່ເຖົ້າຂອງ **ຄ** ຈຶ່ງໄດ້ຮ້ອງຟ້ອງສານເພື່ອໃຫ້ສານພິຈາລະນາປົດສິດ **ກ** ແລະ **ຂ** ອອກຈາກການເປັນພໍ່ແມ່ຂອງ **ຄ** ສານຈຶ່ງໄດ້ຕັດສິນໃນການປົດສິດ **ກ** ແລະ **ຂ** ໃນການເປັນຜູ້ປົກຄອງ ແລະ ໄດ້ກຳນົດເອົາ ງ ເປັນຜູ້ປົກຄອງ **ຄ** ຫຼັງຈາກທີ່ຄຳຕັດສິນໃຊ້ໄດ້ຢ່າງເດັດຂາດແລ້ວພັນທະຂອງ **ກ** ແລະ **ຂ** ແມ່ນສິ້ນສຸດໃນການເປັນຜູ້ຕາງໜ້າ **ຄ** ໃນການເຮັດທຸລະກຳທຸກຢ່າງ. **4.** **ສ** ຖືກແຕ່ງຕັ້ງໃຫ້ເປັນຜູ້ອຳນວຍການ (ຜູ້ຕາງໜ້າ) ໃຫ້ແກ່ບໍສັດ **ຄ** ຕໍ່ມາບໍລິສັດດັ່ງກ່າວບໍ່ມີຜົນກຳໄລ ແລະ ມີໜີ້ສິນຫຼາຍຊຶ່ງບໍ່ສາມາດດຳເນີນທຸລະກິດຕໍ່ໄດ້ສານໄດ້ຕັດສິນໃຫ້ບໍລິສັດ **ຄ** ເປັນບໍລິສັດລົ້ມລະລາຍ; ສະແດງວ່າ **ສ** ໄດ້ສິ້ນສຸດ ການເປັນຜູ້ຕາງໜ້າ ຫຼື ໃນກໍລະນີ **ສ** ຫາກໄດ້ເສຍຊີວິດ ການເປັນຜູ້ອຳນວຍການບໍລິສັດ **ຄ** ກໍແມ່ນຈະສິ້ນສຸດ. **5.** **ກ** (ຜູ້ຖືກຕາງໜ້າ) ໄດ້ມອບສິດໃຫ້ທ້າວ **ຂ** (ຜູ້ຕາງໜ້າ) ໄປຊື້ສິດນຳໃຊ້ນຳທີ່ດິນຈຳນວນ 5 ເຮັກຕານຳ **ຈ** ພາຍຫຼັງ **ຂ** (ຜູ້ຕາງໜ້າ) ໄດ້ເຮັດສັນຍາຊື້ຂາຍກັບ **ຈ** ແລ້ວ ແລະ ຜູ້ກ່ຽວໄດ້ມອບເອກະສານສັນຍາຊື້ຂາຍສິດນຳໃຊ້ນຳທີ່ດິນໃຫ້ແກ່ **ກ** (ຜູ້ຖືກຕາງໜ້າ)ແລ້ວຖືວ່າການເປັນຜູ້ຕາງໜ້າຂອງ **ຂ** ໄດ້ສິ້ນສຸດ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກມາດຕາ 95 ຂອງກົດໝາຍວ່າດ້ວຍການດຳເນີນຄະດີຂອງແພ່ງ ປີ 2012 ຍ້ອນວ່າກົດໝາຍປັດຈຸບັນບໍ່ໄດ້ກຳນົດຫຼັກການກ່ຽວກັບການສິ້ນສຸດການຕາງໜ້າຕາມກົດໝາຍ ແລະ ຕາມສັນສັນຍາ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 111 ແລະ 112 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 95 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ປີ 2012; ມາດຕາ 220, 224 ແລະ 225 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ໝວດທີ 5
ໄລຍະເວລາ

ມາດຕາ 43 ໄລຍະເວລາ

ໄລຍະເວລາ ແມ່ນ ຊ່ວງເວລາໃດໜຶ່ງ ທີ່ກຳນົດເວລາເລີ່ມຕົ້ນ ໄປເຖິງເວລາສິ້ນສຸດ ເພື່ອໃຫ້ຜູ້ເຂົ້າຮ່ວມໃນສາຍພົວພັນທາງແພ່ງ ນຳໃຊ້ສິດ ແລະ ປະຕິບັດພັນທະຂອງຕົນ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ຄວາມໝາຍຂອງໄລຍະເວລາແລະເວລາເລີ່ມຕົ້ນເຖິງເວລາສິ້ນສຸດ. ເພື່ອກຳນົດວິທີຄິດໄລ່ໄລຍະເວລາ ເພື່ອເປັນການປ້ອງກັນ ກໍລະນີທີ່ຄູ່ກໍລະນີ ຫຼື ກົດໝາຍຫາກບໍ່ໄດ້ກຳນົດໄວ້ ຊຶ່ງຈະເຮັດໃຫ້ການນຳໃຊ້ວິທີການຄິດໄລ່ໄລຍະເວລາຂອງແຕ່ລະຄົນທີ່ມີວິທີການແຕກຕ່າງກັນ ຈະພາໃຫ້ເກີດບັນຫາຕ່າງໆຕາມມາ.
ຕົວຢ່າງ	ໃນວັນທີ 25 ກຸມພາ 2019 **ກ** ໄດ້ກູ້ຢືມເງິນຈາກທະນາຄານ **ຂ** ຈຳນວນ 100.000.000 ກີບ ເພື່ອເອົາໄປຊື້ໝູມາລ້ຽງ ແລະ ຊື້ຫົວອາຫານ ກຳນົດການກູ້ຢືມ ໜຶ່ງປີດ້ວຍອັດຕາດອກເບ້ຍ 18% ຕໍ່ປີ, ໃນສັນຍາໄດ້ກຳນົດໄວ້ວ່າ ການປ່ອຍເງິນຕົວຈິງແມ່ນເຮັດເປັນສອງງວດ ງວດທີໜຶ່ງ **ກ** ຈະໄດ້ຮັບໃນວັນເຊັນສັນຍາຈຳນວນ 70.000.000 ກີບ ເພື່ອໄປຊື້ໝູນ້ອຍພ້ອມຫົວອາຫານ, ງວດທີ ສອງ ວັນທີ 24 ພຶດສະພາ 2019 ຈຳວນ 30.000.000 ກີບ ເພື່ອໄປຊື້ຫົວອາຫານໝູ. ສັນຍາມີກຳນົດໜຶ້ງປີນັບແຕ່ວັນທີ 25 ກຸມພາ 2019 ເຖິງ 24 ກຸມພາ 2020 ທະນາຄານ **ຂ** ມີພັນທະຕ້ອງປ່ອຍເງິນໃຫ້ **ກ** ຕາມທີ່ໄດ້ກຳນົດໃນສັນຍາ ຄື ໃນມື້ເຊັນສັນຍາ ຈຳນວນ 70.000.000 ກີບ ແລະ ໃນວັນທີ 24 ພຶດສະພາ ຈຳນວນ 30.000.000 ກີບ ແລະ ມີສິດໄດ້ຮັບເງິນຕົ້ນທຶນ ແລະ ດອກເບ້ຍທັງໝົດພາຍຫຼັງຄົບກຳນົດເວລາຕາມສັນຍາໃນວັນທີ 24 ກຸພາ 2020 ສ່ວນ **ກ** ມີສິດໄດ້ຮັບເງິນຕາມສັນຍາເປັນສອງງວດ ແລະ ມີພັນທະຊຳລະເງິນຄືນທັງຕົ້ນທຶນ ແລະ ດອກເບ້ຍແກ່ທະນາຄານ **ຂ** ໃນວັນສິ້ນສຸດສັນຍາ ໜຶ່ງປີ ໃນວັນທີ 24 ກຸມພາ 2020.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງໃໝ່ ເພື່ອນຳໃຊ້ເປັນບ່ອນອີງໃນການເລີ່ມນັບກຳນົດເວລາແລະເວລາທີ່ສິ້ນສຸດເນື່ອງຈາກວ່າຢູ່ໃນຂົງເຂດກົດໝາຍແພ່ງ ຫຼື ກົດໝາຍການດຳເນີນຄະດີແພ່ງຍັງບໍ່ທັນກຳນົດວິທີການນັບ ຫຼື ການຄິດໄລ່ໄລຍະເວລາໄວ້ ຫຼື ບາງກົດໝາຍ ກໍກຳນົດເພື່ອນຳໃຊ້ສະເພາະເຫດການໃດໜຶ່ງ ຊຶ່ງເຫັນວ່າຍັງບໍ່ທັນເປັນຫຼັກການລວມ ຈຶ່ງບັນຍັດເລື່ອງນີ້ໄວ້ໃນປະມວນກົດໝາຍແພ່ງ.

ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 144 ວັກ 1 ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2015.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 44 ການກຳນົດໄລຍະເວລາ

ການກຳນົດ ໄລຍະເວລາແມ່ນ ໃສ່ກຳນົດຂອບເຂດເວລາ, ການນຳໃຊ້ແລະການຄິດໄລ່ ໄລຍະເວລາ, ການເລີ່ມນັບໄລຍະເວລາ ແລະ ການສິ້ນສຸດໄລຍະເວລາ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ຂອບເຂດຂອງເວລາ, ການນຳໃຊ້ ແລະ ການຄິດໄລ່ໄລຍະເວລາ.
ຕົວຢ່າງ	ໃນວັນທີ 1 ຕຸລາ 2016 **ກ** ໄດ້ເຮັດສັນຍາເຊົ່າລົດກັບ **ຂ** ມີກຳນົດເວລາເຊົ່າ 30 ວັນ ຊຶ່ງເລີ່ມແຕ່ວັນເຮັດສັນຍາເປັນຕົ້ນໄປການຄິດໄລ່ລະຍະເວລາແມ່ນ ໃຫ້ເລີ່ມນັບແຕ່ວັນທີ 2 ຕຸລາ 2016 ຈົນຮອດວັນທີ 31 ຕຸລາ 2016. ອີງຕາມ ມາດຕາ 47 ຂໍ້ 2 ການເລີ່ມນັບໄລຍະເວລາແມ່ນເລີ່ມຈາກມື້ຖັດໄປ. ການຄິດໄລ່ແບບນີ້ ແມ່ນ ໃຫ້ຈຳນວນມື້ທີ່ເຊົ່າລົດຄົບ 30 ວັນ.
ເຫດຜົນ ໃນການສ້າງ ໃໝ່	ມາດຕານີ້ສ້າງ ໃໝ່ ເພື່ອນຳ ໃຊ້ເປັນ ບ່ອນ ອີງ ໃນ ການ ກຳ ນົ ດ ຂອ ບ ເ ຂ ດ ໄ ລ ຍ ະ ເ ວ ລ າ, ການ ນຳ ໃ ຊ້ ແ ລ ະ ການ ຄິ ດ ໄ ລ່ ໄ ລ ຍ ະ ເ ວ ລ າ ເ ນື່ ອ ງ ຈ າ ກ ວ່ າ ຢູ່ ໃ ນ ຂົ ງ ເ ຂ ດ ກົ ດ ໝ າ ຍ ແ ພ່ ງ ຫ ຼື ກົ ດ ໝ າ ຍ ການ ດ ຳ ເ ນີ ນ ຄ ະ ດີ ແ ພ່ ງ ຫ ຼື ກົ ດ ໝ າ ຍ ອື່ ນ ຍ ັ ງ ບໍ່ ທັ ນ ກ ຳ ນົ ດ ຂ ອ ບ ເ ຂ ດ, ຫ ຼັ ກ ການ ຄິ ດ ໄ ລ່ ໄ ລ ຍ ະ ເ ວ ລ າ ໄ ວ້ ຫ ຼື ບ າ ງ ກົ ດ ໝ າ ຍ ກ ຳ ກ ຳ ນົ ດ ນ ຳ ໃ ຊ້ ສ ະ ເ ພ າ ະ ເ ຫ ດ ການ ໃ ດ ໜ່ ງ ຊ ຶ ່ ງ ເ ຫ ັ ນ ວ່ າ ຍ ັ ງ ບໍ່ ທ ັ ນ ເ ປ ັ ນ ຫ ຼ ັ ກ ການ ລ ວ ມ ຈ ຶ ່ ງ ບ ັ ນ ຍ ັ ດ ເ ລື ່ ອ ງ ນ ີ້ ໄ ວ້ ໃ ນ ປ ະ ມ ວ ນ ກ ົ ດ ໝ າ ຍ ແ ພ່ ງ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 47 ແລະ 48 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 45 ການກຳນົດຂອບເຂດເວລາ

ໄລຍະເວລາ ອາດກຳນົດເປັນວິນາທີ, ນາທີ, ຊົ່ວໂມງ, ວັນ, ອາທິດ, ເດືອນ, ປີຫຼືດ້ວຍເຫດການໃດໜຶ່ງທີ່ເກີດຂຶ້ນ.

ໃນກໍລະນີທີ່ໄດ້ຕົກລົງກັນກ່ຽວກັບກຳນົດເວລາ ເປັນ ຕົ້ນອາທິດ, ກາງອາທິດ,ທ້າຍອາທິດ, ຕົ້ນ ເດືອນ, ກາງເດືອນ, ທ້າຍເດືອນ, ຕົ້ນປີ, ກາງປີ, ທ້າຍປີນັ້ນ ໃຫ້ປະຕິບັດ ດັ່ງນີ້:

1. ຕົ້ນອາທິດແມ່ນ ວັນຈັນ ຫາ ວັນອັງຄານຂອງອາທິດນັ້ນ;
2. ກາງອາທິດ ແມ່ນ ວັນພຸດ ຫາ ວັນພະຫັດ ຂອງອາທິດນັ້ນ;
3. ທ້າຍອາທິດແມ່ນ ວັນສຸກ ຫາວັນອາທິດ ຂອງອາທິດນັ້ນ;
4. ຕົ້ນເດືອນແມ່ນວັນທີ 1 ຫາ ວັນທີ 10 ຂອງເດືອນນັ້ນ;
5. ກາງເດືອນແມ່ນວັນທີ 11 ຫາ ວັນທີ 20 ຂອງເດືອນນັ້ນ;
6. ທ້າຍເດືອນແມ່ນວັນທີ 21 ຫາ ວັນສຸດທ້າຍຂອງເດືອນນັ້ນ;
7. ຕົ້ນປີແມ່ນ ເດືອນມັງກອນ ຫາ ເດືອນເມສາ;
8. ກາງປີແມ່ນ ເດືອນພຶດສະພາ ຫາ ເດືອນສິງຫາ;
9. ທ້າຍປີແມ່ນ ເດືອນກັນຍາ ຫາ ເດືອນທັນວາ.

ຈຸດປະສົງ	ເພື່ອກຳນົດຈຸດເລີ່ມຕົ້ນ ຈຸດກາງ ແລະ ຈຸດສຸດທ້າຍ ຂອງຂອບເຂດຂອງເວລາ ອາດຈະເປັນວິນາທີ, ນາທີ, ຊົ່ວໂມງ, ວັນ, ອາທິດ, ເດືອນ, ປີ ຫຼື ດ້ວຍເຫດການໃດໜຶ່ງ
ຕົວຢ່າງ	**1.** **ກ** ໄດ້ຢືມລົດ **ຂ** ໄປໃຊ້ ແລ້ວໃຫ້ສັນຍາວ່າຈະເອົາມາສົ່ງ ໃນຕົ້ນອາທິດໜ້າ ເມື່ອອາທິດໜຶ່ງຜ່ານໄປ ວັນຈັນ **ກ** ມີສິດທວງເອົາລົດຄືນ ແລະ **ຂ** ຕ້ອງໄດ້ສົ່ງລົດໃຫ້ **ກ** ຄື ຢ່າງຊ້າແມ່ນວັນອັງຄານ. **2.** **ກ** ໄດ້ ບອກ **ຂ** ວ່າ ໃນກາງອາທິດຈະນຳເງິນມາສົ່ງ **ຂ** ເມື່ອ ຮອດ ວັນພຸດ ຫຼື ວັນພະຫັດ ຂອງອາທິດ ທີ່ **ກ** ໄດ້ສັນຍາ ໄວ້ **ກ** ຕ້ອງນຳເງິນໄປສົ່ງ **ຂ** ຕາມສັນຍາ. **3.** ໃນວັນຈັນ **ກ** ໄດ້ຮັບແປງລົດໃຫ້ **ຂ** ພ້ອມທັງໃຫ້ສັນຍາວ່າ ທ້າຍອາທິດນີ້ ຈະສ້ອມແປງໃຫ້ແລ້ວ **ຂ** ໝາຍຄວາມວ່າ **ກ** ຕ້ອງສ້ອມແປງໃຫ້ແລ້ວວັນໃດກໍໄດ້ ລະຫວ່າງວັນສຸກ ຫາ ວັນອາທິດ ຂອງອາທິດນັ້ນ. **4.** **ກ** ໄດ້ເຮັດສັນຍາກັບ **ຂ** ໃຫ້ເລີ່ມສ້ອມແປງເຮືອນ ໃຫ້ໃນຕົ້ນເດືອນກັນຍາ 2021 **ຂ** ສາມາດ ມາເລີ່ມລົງມືສ້ອມແປງວັນໃດກໍໄດ້ ນັບແຕ່ວັນທີ 1 ຫາ 10 ກັນຍາ 2021. **5.** ກາງເດືອນແມ່ນວັນທີ 11 ຫາ ວັນທີ 20 ຂອງເດືອນນັ້ນ **ກ** ໄດ້ສັນຍາກັບ **ຂ** ວ່າ ໃຫ້ **ຂ** ໂອນເງິນໃຊ້ໜີ້ **ກ** ໃນ ກາງເດືອນ ທັນວາ 2021 **ຂ** ສາມາດ ໂອນເງິນໃຊ້ໜີ້ **ກ** ມື້ໃດກໍໄດ້ ລະຫວ່າງວັນທີ 11-20 ທັນວາ 2021. **6.** ຕົ້ນປີແມ່ນ ເດືອນມັງກອນ ຫາ ເດືອນ ເມສາ ຂອງເດືອນນັ້ນ **ກ** ສັນຍາກັບ **ຂ** ວ່າຈະນຳເອົາ ເຄື່ອງທີ່ຢືມໄປມາສົ່ງ ໃນຕົ້ນປີ 2022 ໃນລະຫວ່າງ ເດືອນມັງກອນ ຫາ ເດືອນເມສາ 2022 **ກ** ຈະນຳເຄື່ອງທີ່ຢືມໄປມາສົ່ງມື້ໃດກໍໄດ້.

	7. **ກ** ໄດ້ກູ້ຢືມເງິນນຳ **ຂ** ໃນວັນທີ 1 ມັງກອນ 2017 ຊຶ່ງຄູ່ສັນຍາໄດ້ຕົກລົງໃຊ້ແທນຄືນແມ່ນກາງປີ 2017 ສະນັ້ນ,ໃນກໍລະນີນີ້ **ຂ** ມີສິດທອງໃຫ້ **ກ** ໃຊ້ໜີ້ ເລີ່ມແຕ່ວັນທີ 01 ພຶດສະພາ ຫາ 31 ສິງຫາ 2017. 8. **ກ** ໄດ້ໄປກູ້ຢືມເງິນນຳ **ຂ** ຊຶ່ງໄດ້ຕົກລົງຈະໃຊ້ແທນດ້ວຍເຂົ້າຈຳນວນ 10 ໝື່ນໃນທ້າຍປີ ພາຍຫຼັງເກັບກູ້ເຂົ້າມາແລ້ວ ໝາຍຄວາມວ່ານັບແຕ່ເດືອນກັນຍາ ຫາ ເດືອນ ທັນວາ **ກ** ຕ້ອງໄດ້ເອົາເຂົ້າມາໃຫ້ **ຂ** ຕາມສັນຍາ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງໃໝ່ ເພື່ອນຳໃຊ້ເປັນບ່ອນອີງກ່ຽວກັບຂອບເຂດຂອງກຳນົດເວລາ ຄວນຈະເລີ່ມນັບເວລາໃດເຊັ່ນ: ການເກີດຈະນັບວັນທີ, ເດືອນປີທີ່ເກີດແຕ່ຖ້າບໍ່ຈື່ວັນທີແຕ່ຈື່ເດືອນກໍຈະນັບວັນ 1 ຂອງເດືອນຖັດໄປ ແຕ່ຖ້າບໍ່ຈື່ວັນທີ ແລະ ເດືອນ ແຕ່ຈື່ ປີ ກໍຈະນັບວັນທີ 1 ມັງກອນຂອງປີຖັດໄປ. ນອກຈາກນີ້ ຍັງມີການກະທຳຫຼາຍຢ່າງ ທີ່ເກີດຂຶ້ນໃນສັງຄົມ ທີ່ນຳໃຊ້ເວລາຄິດໄລ່ເປັນເງິນເຊັ່ນ: ຄ່າໃຊ້ ຄຶ້ນໂທລະສັບຄິດໄລ່ເປັນນາທີລະ 250.000 ກີບ, ການເຮັດວຽກຄິດໄລ່ຄ່າແຮງງານເປັນຊົ່ວໂມງ/ມື້, ກີລາແລ່ນ, ກີລາລອຍນ້ຳ ແລະ ອື່ນໆກໍຄິດໄລ່ເປັນນາທີ ຫຼື ເວລາອື່ນໆ. ອີກເຫດຜົນເຫັນວ່າໃນຂົງເຂດກົດໝາຍແພ່ງ ຫຼື ກົດໝາຍການດຳເນີນຄະດີແພ່ງ ຫຼື ກົດໝາຍອື່ນ ຍັງບໍ່ມີຫຼັກການກຳນົດ ຂອບເຂດເວລາໄວ້ ຫຼື ອາດຈະມີບາງກົດໝາຍກຳນົດໄວ້ແຕ່ກໍເປັນກໍລະນີນຳໃຊ້ສະເພາະເຫດການໃດໜຶ່ງເທົ່ານັ້ນ ຊຶ່ງເຫັນວ່າຍັງບໍ່ທັນເປັນຫຼັກການລວມດັ່ງນັ້ນ, ຈຶ່ງບັນຍັດເລື່ອງນີ້ໄວ້ໃນປະມວນກົດໝາຍແພ່ງ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 144 ຂໍ້ 2 ຂອງປະມວນກົດໝາຍແພ່ງຫວຽດນາມ 2015 ໄດ້ກຳນົດວ່າ: ຂອບເຂດເວລາອາດຈະກຳນົດດ້ວຍນາທີ, ຊົ່ວໂມງ, ມື້, ອາທິດ, ເດືອນ, ປີ ຫຼືດ້ວຍເຫດການໃດໜຶ່ງ; ມາດຕາ 146 ຂໍ້ 2, 3 ຂອງປະມວນກົດໝາຍແພ່ງຫວຽດນາມ 2015; ມາດຕາ 138 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 46 ການນຳໃຊ້ແລະ ການຄິດໄລ່ໄລຍະເວລາ

ການນຳໃຊ້ ແລະ ການຄິດໄລ່ໄລຍະເວລາ ໄດ້ກຳນົດໄວ້ໃນມາດຕາ 45 ຂອງປະມວນກົດໝາຍສະບັບນີ້ ເວັ້ນເສຍແຕ່ ກົດໝາຍ, ຄຳຕົກລົງຂອງສານປະຊາຊົນ ຫຼືສັນຍາ ຫາກໄດ້ກຳນົດໄວ້ເປັນຢ່າງອື່ນ.

ຈຸດປະສົງ	ເພື່ອຄິດໄລ່ໄລຍະເວລາ ໃນກໍລະນີກົດໝາຍ, ລະບຽບການ, ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ, ຄຳພິພາກສາຂອງສານ ແລະ ສັນຍາໄດ້ກຳນົດໄວ້ສະເພາະ.
ຕົວຢ່າງ	1. **ກ** ໄດ້ມາເຊົ່າລົດຈິກຂອງ **ຂ** ໃນວັນທີ 1 ມີນາ 2018 ກຳນົດເຊົ່າ 4 ເດືອນ ໃນມູນຄ່າເຊົ່າ 50.000.000 ກີບ ແຕ່ໃນສັນຍາໄດ້ກຳນົດລະອຽດວ່າ 120 ວັນ ຕ້ອງໄດ້ເອົາລົດມາສົ່ງ, ເມື່ອອີງຕາມສັນຍາແລ້ວຄວາມໝາຍວ່າ **ກ** ຕ້ອງໄດ້ນຳລົດມາສົ່ງໃຫ້ **ຂ** ໃນວັນທີ 28 ເດືອນມິຖຸນາ 2018 ເຖິງວ່າ ເດືອນທີ 4 ຍັງບໍ່ເຖິງວັນທີ 30 ເປັນວັນສິ້ນສຸດເດືອນກໍຕາມ. 2. **ກ** ໄດ້ ຄຸ້ມຄອງ ທີ່ດິນ ໜຶ່ງຕອນ ນັບແຕ່ ປີ 1995 ຈົນຮອດປີ 2020 ເປັນຕົ້ນມາດ້ວຍຄວາມສະງົບ ເປີດເຜີຍ ເປັນເວລາ 35 ປີ ການໄດ້ກຳມະສິດຕາມອາຍຸຄວາມ ກ່ຽວກັບອະສັງຫາລິມະຊັບແມ່ນ 20 ປີ ແຕ່ທີ່ດິນ ທີ່ **ກ** ຄຸ້ມຄອງຢູ່ນັ້ນເປັນກຳມະສິດ ຂອງລັດ **ກ** ຈຶ່ງບໍ່ສາມາດມີກຳມະສິດຕໍ່ທີ່ດິນດັ່ງກ່າວໄດ້.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງໃໝ່ ເພື່ອນຳໃຊ້ເປັນບ່ອນອີງ ກ່ຽວກັບການນຳໃຊ້ ແລະຄິດໄລ່ລະຍະເວລາ ຕ້ອງປະຕິບັດຕາມປະມວນກົດໝາຍແພ່ງ ຫຼື ມີກົດໝາຍ, ລະບຽບການ, ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ, ຄຳພິພາກສາຂອງສານ ແລະ ສັນຍາໄດ້ກຳນົດໄວ້ສະເພາະກໍໃຫ້ນຳໃຊ້ຕາມນັ້ນ. ອີກເຫດຜົນໜຶ່ງເຫັນວ່າ ໃນຂົງເຂດກົດໝາຍແພ່ງ ຫຼື ກົດໝາຍການດຳເນີນຄະດີແພ່ງ ຫຼື ກົດໝາຍອື່ນຍັງບໍ່ມີຫຼັກການທີ່ກຳນົດການນຳໃຊ້ ແລະ ຄິດໄລ່ລະຍະເວລາ ຫຼື ອາດຈະມີບາງກົດໝາຍກຳນົດໄວ້ ແຕ່ກໍເປັນກໍລະນີນຳໃຊ້ສະເພາະເຫດການໃດໜຶ່ງເທົ່ານັ້ນ ຊຶ່ງເຫັນວ່າຍັງບໍ່ທັນເປັນຫຼັກການລວມດັ່ງນັ້ນ, ຈຶ່ງບັນຍັດເລື່ອງນີ້ໄວ້ໃນປະມວນກົດໝາຍແພ່ງ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 138 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ; ມາດຕາ 139/1 ຂອງປະມວນກົດໝາຍແພ່ງ ແລະ ພານິດຂອງໄທ.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 47 ການເລີ່ມນັບໄລຍະເວລາ

ໄລຍະເວລາ ຈະເລີ່ມນັບໃນກໍລະນີໃດໜຶ່ງ ດັ່ງນີ້:

1. ຖ້າໄລຍະເວລາຫາກກຳນົດເປັນນາທີຫຼືຊົ່ວໂມງໃຫ້ເລີ່ມນັບແຕ່ມີການກະທຳໃນເວລານັ້ນເປັນຕົ້ນໄປ ເວັ້ນເສຍແຕ່ ກົດໝາຍ, ລະບຽບການ, ຄຳຕົກລົງຂອງສານປະຊາຊົນຫຼື ສັນຍາ

ຫາກໄດ້ກຳນົດໄວ້ເປັນຢ່າງອື່ນ.

2. ຖ້າໄລຍະເວລາຫາກກຳນົດເປັນ ວັນ, ອາທິດ, ເດືອນ, ປີໃຫ້ເລີ່ມນັບແຕ່ວັນຖັດໄປ.

3. ຖ້າໄລຍະເວລາຫາກບໍ່ສາມາດກຳນົດວັນທີໄດ້ໃຫ້ກຳນົດເອົາວັນທີ 1 ຂອງເດືອນຖັດໄປ ເປັນວັນເລີ່ມ ນັບເວລາ.

4. ຖ້າໄລຍະເວລາຫາກກຳນົດດ້ວຍເຫດການໃດໜຶ່ງທີ່ເກີດຂຶ້ນ ເຊັ່ນໄພພິບັດທາງ ທຳມະຊາດໃຫ້ເລີ່ມ ນັບແຕ່ວັນເກີດເຫດການນັ້ນ ເປັນຕົ້ນໄປ.

ໃນກໍລະນີມີການຕໍ່ເວລາໂດຍບໍ່ໄດ້ກຳນົດວັນເລີ່ມຕົ້ນຂອງການຕໍ່ເວລາໃຫ້ເລີ່ມນັບແຕ່ວັນຖັດ ຈາກວັນສຸດທ້າຍຂອງກຳນົດເວລາເດີມ ເປັນວັນເລີ່ມຕົ້ນ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ຈຸດເລີ່ມຕົ້ນຂອງການນັບກຳນົດເວລາ
ຕົວຢ່າງ	1. **ກ** ມອບໃຫ້ **ຂ** ເຮັດວຽກແທນ 2 ຊົ່ວໂມງ ໂດຍຈະຕອບແທນຄ່າ ແຮງງານໃຫ້ 500.000 ກີບ **ຂ** ໄດ້ເລີ່ມເຮັດວຽກ ແຕ່ເວລາ 11 ໂມງ 00 ນາທີ ໃນເມື່ອ ຮອດ 13 ໂມງ 00 ໝາຍຄວາມວ່າ **ຂ** ເຮັດວຽກ ຄົບ ຕາມສັນຍາ ຊຶ່ງຄິດໄລ່ແຕ່ເວລາ 11:00 ທີ່ **ຂ** ໄດ້ ເລີ່ມວຽກເປັນຕົ້ນໄປ. 2. ໃນວັນທີ 5 ມີຖຸນາ 2020 **ກ** ໄດ້ເຮັດສັນຍາກັບ **ຂ** ໃຫ້ໄປຍາມສວນ ໃຫ້ ກຳນົດໜຶ່ງເດືອນ ຈຸດເລີ່ມຕົ້ນຂອງການປະຕິບັດສັນຍາແມ່ນ ເລີ່ມ ແຕ່ ວັນທີ 6 ມີຖຸນາ ໄປຈົນຄົບ ໜຶ່ງເດືອນ ໝາຍຄວາມວ່າໃຫ້ເລີ່ມນັບ ແຕ່ວັນ ຖັດໄປຂອງມື້ເຮັດສັນຍາ. 3. ໃນເດືອນ ກຸມພາ 2019 **ກ** ໄດ້ກູ້ຢືມເງິນນຳ **ຂ** ຊຶ່ງໄດ້ກຳນົດໃຊ້ແທນ ຄືນ ຫຼັງຈາກໜຶ່ງປີ ໃນເມື່ອສັນຍາບໍ່ໄດ້ກຳນົດວັນທີ ກໍຖືວ່າ **ກ** ໄດ້ກູ້ຢືມ ເງິນນຳ **ຂ** ໃນວັນທີ 1 ມີນາ 2019. 4. ວັນທີ 1 ສິງຫາ 1966 ນ້ຳໄດ້ຖ້ວມວຽງຈັນ 15 ວັນ. ໄລຍະເວລາຂອງ ນ້ຳຖ້ວມແມ່ນ ນັບແຕ່ວັນທີ 1 ສິງຫາ ຫາ ວັນທີ 15 ສິງຫາ 1966. 5. **ກ** ໄດ້ເຮັດສັນຍາເຊົ່າທີ່ດິນນຳ **ຂ** ແຕ່ວັນທີ 1 ມັງກອນ 2015 ກຳນົດ 5 ປີ ຈົນຮອດວັນທີ 31 ທັນວາ 2020 ພາຍຫຼັງສັນຍາສິ້ນສຸດ **ກ** ໄດ້ສັນຍາ ເຊົ່າຕໍ່ ເປັນເວລາ ສາມປີ ແຕ່ ລືມ ໃສ່ວັນທີ ທີ່ໄດ້ເຊັນສັນຍາ ກໍລະນີນີ້ ສັນຍາສະບັບທີສອງ ແມ່ນເລີ່ມນັບແຕ່ວັນທີ 1 ມັງກອນ 2021 ເປັນຕົ້ນ ມາ.

ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງໃໝ່ ເພື່ອນຳໃຊ້ເປັນບ່ອນອີງກ່ຽວກັບການເລີ່ມນັບເວລາໃດຈະເລີ່ມເມື່ອໃດ. ໃນທາງທິດສະດີແລ້ວຫົວໜ່ວຍເວລາສາມາດແບ່ງອອກເປັນຫົວໜ່ວຍເວລາທີ່ສັ້ນ(ວິນາທີ, ນາທີ) ແລະຫົວໜ່ວຍເວລາທີ່ຍາວ(ມື້, ອາທິດ, ເດືອນ, ປີ...) ກໍລະນີຫົວໜ່ວຍເວລາທີ່ສັ້ນເຊັ່ນໃຫ້ກະທຳສິ່ງໃດໜຶ່ງພາຍໃນ 30 ວິນາທີໃຫ້ເລີ່ມນັບໜຶ່ງໃນວິນາທີນັ້ນໂລດຖ້ານັບວິນາທີຕໍ່ໄປຈະເຮັດໃຫ້ບໍ່ຄົບ 30 ວິນາທີ. ຖ້າມີການກະທຳສິ່ງໃດໜຶ່ງພາຍໃນ 10 ວັນໃຫ້ເລີ່ມນັບວັນທີຖັດໄປເປັນເວລາເລີ່ມຕົ້ນ, ຖ້ານັບໃນວັນນັ້ນຈະເຮັດໃຫ້ບໍ່ຄົບ 10 ວັນເພາະໜຶ່ງວັນມີ 24 ຊົ່ວໂມງ. ເວັ້ນເສຍແຕ່ມີການກຳນົດໄວ້ສະເພາະກໍໃຫ້ເລີ່ມນັບແຕ່ເວລານັ້ນເປັນ ຕົ້ນໄປ. ນອກຈາກນີ້ເຫັນວ່າ ໃນຂົງເຂດກົດໝາຍແພ່ງ ຫຼື ກົດໝາຍການດຳເນີນຄະດີແພ່ງຫຼືກົດໝາຍອື່ນຍັງບໍ່ມີຫຼັກການທີ່ກຳນົດການເລີ່ມນັບເວລາໄວ້ຫຼືອາດຈະມີບາງກົດໝາຍກຳນົດໄວ້ແຕ່ກໍເປັນກໍລະນີນຳໃຊ້ສະເພາະເຫດການໃດໜຶ່ງເທົ່ານັ້ນຊຶ່ງເຫັນວ່າຍັງບໍ່ທັນເປັນຫຼັກການລວມດັ່ງນັ້ນ, ຈຶ່ງບັນຍັດເລື່ອງນີ້ໄວ້ໃນປະມວນກົດໝາຍແພ່ງ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 193/3 ວັກ 2 ແລະ 193/7 ຂອງປະມວນກົດໝາຍແພ່ງ ແລະ ພານິດໄທ; ມາດຕາ 138 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 48 ການສິ້ນສຸດໄລຍະເວລາ

ໄລຍະເວລາ ຈະສິ້ນສຸດລົງໃນກໍລະນີໃດໜຶ່ງ ດັ່ງນີ້:

1. ຖ້າໄລຍະເວລາຫາກຄິດໄລ່ເປັນຈຳນວນ ນາທີ ຫຼື ຊົ່ວໂມງ ເວລາຈະສິ້ນສຸດລົງພາຍຫຼັງນາທີສຸດທ້າຍຂອງກຳນົດເວລານັ້ນໄດ້ຜ່ານໄປ;
2. ຖ້າໄລຍະເວລາຫາກຄິດໄລ່ເປັນຈຳນວນ ວັນ, ອາທິດ, ເດືອນ, ປີ ເວລາຈະສິ້ນສຸດລົງພາຍຫຼັງວັນສຸດທ້າຍໄດ້ຜ່ານໄປ;
3. ຖ້າວັນສຸດທ້າຍຫາກເປັນວັນພັກທາງລັດຖະການໃນກໍລະນີໄດ້ດຳເນີນການໃນວັນນັ້ນກໍໃຫ້ຖືວ່າເປັນວັນສຸດທ້າຍຂອງໄລຍະເວລາ, ແຕ່ຖ້າບໍ່ໄດ້ດຳເນີນການໃນວັນນັ້ນໃຫ້ຖືເອົາວັນຖັດຈາກວັນພັກນັ້ນ ເປັນວັນສຸດທ້າຍຂອງໄລຍະເວລາ;
4. ການສິ້ນສຸດໄລຍະເວລາຂອງເຫດການໃດໜຶ່ງເຊັ່ນໄພພິບັດທຳມະຊາດໃຫ້ປະຕິບັດຕາມການປະກາດທາງລັດຖະການ. ໃນກໍລະນີທີ່ບໍ່ມີການປະກາດທາງລັດຖະການນັ້ນ ໃຫ້ຖືເອົາວັນທີສະ ພາບການດັ່ງກ່າວນັ້ນກັບຄືນສູ່ສະພາບປົກກະຕິ.

ຈຸດປະສົງ	ເພື່ອໃຫ້ຮູ້ກຳນົດເວລາທີ່ສິ້ນສຸດຂອງການກະທຳໃດໜຶ່ງ ຫຼື ການສິ້ນສຸດເຫດການໃດໜຶ່ງ.

ຕົວຢ່າງ	1. ການແຂ່ງຂັນກີລາບານເຕະລະຫວ່າງທີມ **ກ** ກັບ ທີມ **ຂ** ຈະເລີ່ມຂຶ້ນ ໃນເວລາ 16 ໂມງ 00 ນາທີ; ການເຕະຂອງເກມແມ່ນໃຊ້ເວລາ 90 ນາທີ ບວກກັບເວລາພັກຜ່ອນກາງເກມ 15 ນາທີ ເປັນ 105 ນາທີ ເວລາສິ້ນສຸດເກມແມ່ນ 17 ໂມງ 45 ນາທີ 1 ວິນາທີ. 2. ໃນວັນທີ 25 ມັງກອນ 2016 **ກ** ໄດ້ຂາຍຝາກທີ່ງນາໄວ້ກັບ **ຂ** ກຳນົດເວລາສິ້ນສຸດຂອງການຂາຍຝາກແມ່ນເວລາ 24 ໂມງທ່ຽງຄືນຂອງວັນທີ 25 ມັງກອນ 2019 ຖືວ່າຄົບກຳນົດສາມປີ. 3. ໃນວັນທີ 1 ເມສາ 2019 **ກ** ໄດ້ໄປເຊົ່າລົດ ຈາກບໍລິສັດ **ຂ** ກຳນົດເວລາເຊົ່າ ໜຶ່ງເດືອນ, **ກ** ຕ້ອງໄດ້ນຳລົດມາສົ່ງ **ຂ** ໃນວັນທີ 1 ພຶດສະພາ (ວັນກຳມະກອນສາກົນ), ຊຶ່ງບໍລິສັດ **ຂ** ໄດ້ພັກເຮັດວຽກ ຕາມແຈ້ງການທາງລັດຖະການ ດັ່ງນັ້ນ, **ກ** ສາມາດນຳລົດ ໄປສົ່ງຄືນໃຫ້ບໍລິສັດ **ຂ** ໃນວັນທີ 2 ພຶດສະພາ 2019. 4. ໃນວັນທີ 15 ສິງຫາ ມີເຫດການນ້ຳຖ້ວມບ້ານ **ກ** ຮອດວັນທີ 18 ສິງຫາ ນ້ຳໄດ້ລົດລົງກັບຄືນສູ່ສະພາບປົກກະຕິມື້ວັນທີ 18 ສິງຫາ ເປັນມື້ທີ່ໄດ້ກຳນົດເວລາຂອງເຫດການນັ້ນກໍສິ້ນສຸດລົງໃນວັນນັ້ນ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງໃໝ່ ເພື່ອນຳໃຊ້ເປັນບ່ອນອີງກ່ຽວກັບການພິຈາລະນາເລື່ອງກຳນົດເວລາຈະສິ້ນສຸດເວລາໃດເຊັ່ນ: ອາຍຸຄວາມໃນການຮ້ອງຟ້ອງຕາມສັນຍາ, ອາຍຸຄວາມໃນການທວງເອົາຊັບຈະໝົດກຳນົດເວລາໃດ. ນອກຈາກນີ້ເຫັນວ່າ ໃນຂົງເຂດກົດໝາຍແພ່ງ ຫຼື ກົດໝາຍການດຳເນີນຄະດີແພ່ງ ຫຼື ກົດໝາຍອື່ນ ຍັງບໍ່ມີຫຼັກການລວມທີ່ກຳນົດການສິ້ນສຸດເວລາໄວ້ ຫຼື ອາດຈະມີບາງກົດໝາຍກຳນົດໄວ້ແຕ່ກໍເປັນກໍລະນີນຳໃຊ້ສະເພາະເຫດການໃດໜຶ່ງເທົ່ານັ້ນຊຶ່ງເຫັນວ່າຍັງບໍ່ທັນເປັນຫຼັກການລວມດັ່ງນັ້ນ, ຈຶ່ງບັນຍັດເລື່ອງນີ້ໄວ້ໃນປະມວນກົດໝາຍແພ່ງ. ສຳລັບຂໍ້ທີສາມທີ່ໄດ້ກຳນົດໄວ້ວ່າ ຖ້າວັນສຸດທ້າຍຫາກເປັນວັນພັກທາງລັດຖະການໃນກໍລະນີໄດ້ດຳເນີນການໃນວັນນັ້ນ ກໍ່ໃຫ້ຖືວ່າເປັນວັນສຸດທ້າຍຂອງໄລຍະເວລາ, ແຕ່ຖ້າບໍ່ໄດ້ດຳເນີນການໃນວັນນັ້ນ ໃຫ້ຖືເອົາວັນຖັດຈາກວັນພັກນັ້ນ ເປັນວັນສຸດທ້າຍຂອງໄລຍະເວລາ; ວັນພັກລັດຖະການແມ່ນວັນທີ ທາງການໄດ້ກຳນົດໃຫ້ພັກ ເຊັ່ນ ວັນທີ 23 ສິງຫາ, ວັນທີ 1 ມົກຮາ ແລະ ວັນທີ 2 ທັນວາ ຕາມດຳລັດ ເລກທີ 386 ໄດ້ກຳນົດໄວ້ເທົ່ານັ້ນ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 148 ຂໍ້ 3 ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2015 ເມື່ອກຳນົດເວລາຄິດໄລ່ເປັນເດືອນກຳນົດເວລາສິ້ນສຸດລົງໃນວັນທຽບຖານຂອງເດືອນສຸດທ້າຍຂອງກຳນົດເວລາ; ຖ້າຫາກว่าໃນເດືອນ ການສິ້ນສຸດກຳນົດເວລາບໍ່ມີວັນທຽບຖານນັ້ນກຳນົດເວລາກໍຈະສິ້ນສຸດລົງໃນວັນສຸດທ້າຍຂອງເດືອນນັ້ນ; ມາດຕາ 141, 142 ແລະ 143 ວັກ 2 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ໝວດທີ 6
ອາຍຸຄວາມ

ກ. ອາຍຸຄວາມ

ມາດຕາ 49 ອາຍຸຄວາມ

ອາຍຸຄວາມ ແມ່ນ ໄລຍະເວລາ ຊຶ່ງເປັນສາເຫດທີ່ພາໃຫ້ໄດ້ສິດ ຫຼື ເສຍສິດໃນສາຍພົວພັນທາງແພ່ງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນຄວາມໝາຍຂອງອາຍຸຄວາມຊຶ່ງເປັນເຫດທີ່ພາໃຫ້ໄດ້ສິດ ຫຼື ເສຍສິດ ເມື່ອຮອດເວລາໃດໜຶ່ງໃນສາຍພົວພັນກົດໝາຍແພ່ງ
ຕົວຢ່າງ	ໃຫ້ເບິ່ງຕົວຢ່າງ ມາດຕາ 51 ແລະ ມາດຕາ 52. ຂອງບົດອະທິບາຍປະມວນກົດມາຍແພ່ງ
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງໃໝ່ເພື່ອໃຫ້ຜູ້ນຳໃຊ້ເຂົ້າໃຈເຖິງຄວາມໝາຍຂອງອາຍຸຄວາມມີທັງການໄດ້ສິດ ແລະ ເສຍສິດ. ໃນມາດຕາ 42 ກົດໝາຍວ່າດ້ວຍກຳມະສິດ, ມາດຕາ 102 ກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ, ກົດໝາຍວ່າດ້ວຍຄອບຄົວ, ມາດຕາ 40 ແລະ 41 ກົດໝາຍວ່າດ້ວຍການສືບທອດມູນມໍຣະດົກໄດ້ກຳນົດໄລຍະເວລາທີ່ສາມາດຮ້ອງຟ້ອງໄດ້ (ໄລຍະເວລາຮ້ອງຟ້ອງ) ແຕ່ໃນປະມວນກົດໝາຍແພ່ງ ແມ່ນໄດ້ປັບປຸງມາເປັນສາເຫດຂອງການໄດ້ສິດ-ເສຍສິດ ເປັນກົດໝາຍເນື້ອໃນ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ໃນພາກທີ IV ຂອງປະມວນກົດໝາຍແພ່ງຂອງຍີ່ປຸ່ນ ຈະສັງລວມໃຫ້ເຂົ້າໃຈ ແຕ່ບໍ່ມີມາດຕາສະເພາະ; ປະມວນກົດໝາຍແພ່ງກຳປູເຈຍ ກໍບໍ່ໄດ້ກຳນົດເປັນມາດຕາສະເພາະ; ມາດຕາ 149 ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2015 ໄດ້ກຳນົດນິຍາມກ່ຽວກັບອາຍຸຄວາມແມ່ນລະຍະເວລາທີ່ກົດໝາຍໄດ້ກຳນົດໄວ້ເມື່ອສິ້ນສຸດລະຍະເວລານັ້ນຈະເກີດຜົນສະທ້ອນທາງດ້ານກົດໝາຍຕໍ່ກັບເຈົ້າກຳ.
ມາດຕາອ້າງອີງ	ມາດຕາ 50, 51, 52, 314 ແລະ 506 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ກົດໝາຍລາວສ່ວນໃຫຍ່ມີມາດຕານິຍາມ ດັ່ງນັ້ນຈຶ່ງໄດ້ກຳນົດມາດຕານີ້ໃສ່

ມາດຕາ 50 ປະເພດອາຍຸຄວາມ

ອາຍຸຄວາມ ແບ່ງອອກເປັນສອງປະເພດ ດັ່ງນີ້:

1. ອາຍຸຄວາມໄດ້ສິດ;
2. ອາຍຸຄວາມເສຍສິດ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນວ່າໃນອາຍຸຄວາມນັ້ນ ມີອາຍຸຄວາມໄດ້ສິດ ທີ່ເປັນສາເຫດພາໃຫ້ໄດ້ສິດ ແລະ ອາຍຸຄວາມເສຍສິດ ຊຶ່ງເປັນສາເຫດທີ່ພາໃຫ້ສິດຕົກໄປ.
ຕົວຢ່າງ	ໃຫ້ເບິ່ງຕົວຢ່າງ ມາດຕາ 51 ແລະ ມາດຕາ 52. ຂອງບົດອະທິບາຍປະມວນກົດມາຍແພ່ງ
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງໃໝ່ ສຳລັບອາຍຸຄວາມນັ້ນໄດ້ມີການປັບຈາກລະບົບອາຍຸຄວາມໃນການຮ້ອງຟ້ອງຂອງ ມາດຕາ 102 ກົດໝາຍວ່າດ້ວຍ ຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ແລະ ມາດຕາ 42 ກົດໝາຍວ່າດ້ວຍ ກຳມະສິດ ແລະ ມາດຕາ 40 ແລະ 41 ກົດໝາຍວ່າດ້ວຍການສືບທອດມູນມໍຣະດົກ ມາເປັນຮູບແບບຂອງສາເຫດຂອງການໄດ້ສິດ-ເສຍສິດໃນກົດໝາຍເນື້ອໃນ ເພື່ອເຮັດໃຫ້ສອດຄ່ອງກັນ ຈຶ່ງໄດ້ແບ່ງອອກເປັນສອງປະເພດຄື: ອາຍຸຄວາມໄດ້ສິດ ຊຶ່ງເປັນສາເຫດພາໃຫ້ໄດ້ສິດກັບອາຍຸຄວາມເສຍສິດ ຊຶ່ງເປັນສາເຫດພາໃຫ້ເສຍສິດ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 187-201 ຂອງປະມວນກົດໝາຍແພ່ງກຳປູເຈຍ ບໍ່ໄດ້ກຳນົດເປັນມາດຕາສະເພາະແຕ່ກຳນົດກ່ຽວກັບການໄດ້ມາຊຶ່ງກຳມະສິດ ແລະ ເສຍສິດ ຂອງແຕ່ລະມາດຕາ; ມາດຕາ 162-165 ປະມວນກົດໝາຍແພ່ງຍີ່ປຸ່ນ ບໍ່ໄດ້ກຳນົດເປັນມາດຕາສະເພາະກ່ຽວກັບປະເພດອາຍຸຄວາມ ແຕ່ໄດ້ກຳນົດໃຫ້ເຂົ້າໃຈແຕ່ລະມາດຕາ.
ມາດຕາອ້າງອີງ	ມາດຕາ 51 ແລະ 52 ຂອງປະມວນກົດໝາຍແພ່ງ;
ຂໍ້ມູນອື່ນຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 51 ອາຍຸຄວາມໄດ້ສິດ

ອາຍຸຄວາມໄດ້ສິດ ແມ່ນ ສາເຫດຂອງການໄດ້ສິດຂອງຜູ້ໃດໜຶ່ງຕໍ່ຊັບ ດ້ວຍການຄອບຄອງ ແລະ ນຳໃຊ້ຊັບຂອງຜູ້ອື່ນດ້ວຍຄວາມບໍລິສຸດໃຈ, ຢ່າງເປີດເຜີຍ, ຕໍ່ເນື່ອງ ແລະ ສະຫງົບ ຄືກັນກັບຕົນເອງເປັນເຈົ້າຂອງ ເປັນເວລາຊາວປີສຳລັບອະສັງຫາລິມະຊັບ, ຫ້າປີສຳລັບສັງຫາລິມະຊັບ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນເງື່ອນໄຂຂອງອາຍຸຄວາມໄດ້ສິດ ຊຶ່ງເປັນສາເຫດພາໃຫ້ໄດ້ສິດຈາກການຄອບຄອງຊັບເປັນໄລຍະເວລາທີ່ແນ່ນອນໃດໜຶ່ງ. ຊຶ່ງມັນນອນໃນພາກສ່ວນໜຶ່ງຂອງອາຍຸຄວາມໃນສາຍພົວພັນກົດໝາຍແພ່ງ.

ຕົວຢ່າງ	**1.** **ກ** ໄດ້ຄອບຄອງທີ່ດິນໜຶ່ງຕອນຂອງ **ຂ** ໂດຍທີ່ **ກ** ບໍ່ຮູ້ວ່າທີ່ດິນດັ່ງກ່າວເປັນຂອງໃຜມາກ່ອນ ເປັນເວລາ ຊາວປີ ໂດຍບໍ່ມີບຸກຄົນໃດມາທວງທາວເອົາຄືນ ດ້ວຍຄວາມບໍລິສຸດໃຈ, ຢ່າງເປີດເຜີຍ, ຕໍ່ເນື່ອງ ແລະ ສະຫງົບ **ກ** ໄດ້ຄອບຄອງທີ່ດິນດັ່ງກ່າວຄືກັນກັບຕົນເອງເປັນເຈົ້າຂອງພາຍຫຼັງຄອບຄອງມາໄດ້ 20 ປີ ຜູ້ກ່ຽວກໍສາມາດໄດ້ສິດຕໍ່ທີ່ດິນດັ່ງກ່າວ.ຈາກຜົນຂອງ **ກ** ທີ່ໄດ້ຄອບຄອງ **ກ** ຈຶ່ງໄດ້ສິດຕໍ່ທີ່ດິນທີ່ນັ້ນ. **2.** **ກ** ໄດ້ຊື້ຄວາຍໂຕແມ່ **A** ຈາກ **ຂ** ແຕ່ເມຍຂອງ **ຂ** ພັດຫຼົງໄປເອົາຄວາຍໂຕອື່ນທີ່ພວມຖືພາ **B** ໃຫ້. 5 ປີ ຜ່ານໄປ **ຂ** ໄດ້ມາທ້ວງວ່າເມຍຂອງລາວໄດ້ຫຼົງເອົາຄວາຍຜິດໂຕໃຫ້. ແຕ່ເນື່ອງຈາກວ່າ **ກ** ໄດ້ຄອບຄອງຄວາຍໂຕນັ້ນເກີນກວ່າ 5 ປີແລ້ວ ຈຶ່ງຖືວ່າ **ກ** ເປັນເຈົ້າກຳມະສິດຕໍ່ຄວາຍໂຕດັ່ງກ່າວນັ້ນແລ້ວ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກມາດຕາ 102 ຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ແລະ ມາດຕາ 42 ຂອງກົດໝາຍວ່າດ້ວຍກຳມະສິດ ໄດ້ຂຽນລວມໄວ້ທັງການໄດ້ສິດ ແລະ ເສຍສິດ ເຮັດໃຫ້ເຂົ້າໃຈຍາກ ຈຶ່ງແຍກເປັນມາດຕາຕ່າງຫາກເພື່ອໃຫ້ຜູ້ຄອບຄອງຊັບສິ່ງຂອງນັ້ນຮູ້ ແລະ ເຂົ້າໃຈງ່າຍໃນການຈັດຕັ້ງປະຕິບັດ ກ່ຽວກັບອາຍຸຄວາມຕໍ່ຊັບຄົງທີ່ ແລະ ຊັບເຄື່ອນທີ່ມີກຳນົດເວລາຄືແນວໃດ. ອາຍຸຄວາມເສຍສິດ ແມ່ນໃຊ້ສຳລັບ ສິດທີ່ເກີດຂຶ້ນເທົ່ານັ້ນ ບໍ່ໄດ້ໃຊ້ສຳລັບຊັບ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 162 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ ກຳນົດວ່າ: ຜູ້ທີ່ໄດ້ຄອບຄອງຊັບຂອງຜູ້ອື່ນຢ່າງສະຫງົບ ແລະ ເປີດເຜີຍເປັນເວລາ 20 ປີ ດ້ວຍເຈດຈຳນົງເປັນເຈົ້າຂອງຈະໄດ້ກຳມະສິດຊັບສິນດັ່ງກ່າວມາ ແລະ ວັກສອງຜູ້ທີ່ຄອບຄອງຊັບຜູ້ອື່ນໃນເງື່ອນໄຂເທິງນັ້ນ ແຕ່ຜູ້ຄອບຄອງນັ້ນ ບໍ່ຮູ້ວ່າຊັບນັ້ນມີເຈົ້າຂອງ ຫຼື ດ້ວຍຄວາມບໍລິສຸດໃຈ ອາຍຸຄວາມໃນການໄດ້ສິດແມ່ນ 10 ປີ; ມາດຕາ 2272 (ອະສັງຫາ) ແລະ ມາດຕາ 2276 (ສັງຫາ) ຂອງປະມວນກົດໝາຍແພ່ງຝຣັ່ງ.
ມາດຕາອ້າງອີງ	ມາດຕາ 235, 237, 293 ຂໍ້ 8, 303, 304, ແລະ 314 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 52 ອາຍຸຄວາມເສຍສິດ

ອາຍຸຄວາມເສຍສິດ ແມ່ນ ສາເຫດທີ່ພາໃຫ້ສິດສິ້ນສຸດລົງ ອັນເນື່ອງມາຈາກການບໍ່ເຄື່ອນໄຫວຂອງຜູ້ເປັນເຈົ້າຂອງສິດ ພາຍໃນກຳນົດເວລາ ສິບປີສຳລັບສັນຍາຮັບເໝົາກໍ່ສ້າງ, ສາມປີສຳລັບສັນຍາປະເພດອື່ນຫຼືການໃຊ້ແທນຄ່າເສຍຫາຍ ແລະ ສິດທວງອື່ນເວັ້ນເສຍແຕ່ ກົດໝາຍຫາກໄດ້ກຳນົດໄວ້ເປັນຢ່າງອື່ນ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນເງື່ອນໄຂຂອງອາຍຸຄວາມເສຍສິດ ຊຶ່ງເປັນສາເຫດພາໃຫ້ເກີດສິດຈາກການທີ່ບໍ່ນຳໃຊ້ສິດເປັນໄລຍະເວລາທີ່ແນ່ນອນໃດໜຶ່ງ ຊຶ່ງມັນນອນໃນພາກສ່ວນໜຶ່ງຂອງອາຍຸຄວາມໃນສາຍພົວພັນທາງແພ່ງ.
ຕົວຢ່າງ	1. ລົດ **ກ** ໄດ້ແລ່ນໄປຕຳເຮືອນ **ຂ** ເຮັດໃຫ້ເຮືອນຂອງ **ຂ** ເປ່ເພສົມຄວນ **ກ** ໄດ້ຕົກລົງໃຫ້ **ຂ** ສ້ອມແປງກ່ອນ ແລ້ວຈະຫົດແທນຄ່າສ້ອມແປງຄືນໃຫ້ **ຂ** ຫຼັງຈາກນັ້ນເວລາລ່ວງເລີຍໄປເປັນເວລາ ສາມປີກວ່າ **ຂ** ບໍ່ໄດ້ໄປທວງເອົາຄ່າສ້ອມແປງເຮືອນທີ່ເປ່ເພຍ້ອນລົດ **ກ** ຕຳນັ້ນ ສິດຂອງ **ຂ** ກ່ຽວກັບການທວງຄ່າເສຍຫາຍໄດ້ຕົກໄປ ຍ້ອນອາຍຸຄວາມຕາມມາດຕາ 52 ຂອງປະມວນກົດໝາຍແພ່ງ. 2. **ກ** ໄດ້ຮັບເໝົາກໍ່ສ້າງເຮືອນໃຫ້ **ຂ** ແລະ ໄດ້ມອບເຮືອນທີ່ສຳເລັດ ໃຫ້ **ຂ** ໃນວັນທີ 15 ມັງກອນ 1995. ຈາກນັ້ນມາ ສອງປີ ຝາເຮືອນມີການແຕກແຫງ ແຕ່ **ຂ** ກໍບໍ່ໄດ້ໄປທວງໃຫ້ **ກ** ມາສ້ອມແປງຄືນໃໝ່ໃຫ້ຈົນຮອດທີ 20 ກຸມພາ 2007. **ຂ** ຈຶ່ງໄປທວງໃຫ້ **ກ** ມາສ້ອມແປງໃຫ້ ແຕ່ **ກ** ໄດ້ອ້າງວ່າ ອາຍຸຄວາມ ໄດ້ໝົດແລ້ວ. ດັ່ງນັ້ນ **ຂ** ຈຶ່ງເສຍສິດທວງ ຫຼື ຮ້ອງຟ້ອງ ໃຫ້ **ກ** ຮັບຜິດຊອບຕໍ່ຄວາມເສຍຫາຍດັ່ງກ່າວ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງ ຍ້ອນວ່າກົດໝາຍສະບັບປັດຈຸບັນໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະນອກສັນຍາ ມາດຕາ 102 ແລະ ມາດຕາ 40 ກົດໝາຍວ່າດ້ວຍການສືບທອດມູນມໍຣະດົກ ແຕ່ຫົວຂໍ້ມາດຕາໄດ້ຂຽນວ່າອາຍຸຄວາມໃນການຮ້ອງຟ້ອງ ມັນກວມເອົາທັງການໄດ້ສິດ ແລະ ເສຍສິດ ດັ່ງນັ້ນເຫັນວ່າບໍ່ແຈ້ງ ຈຶ່ງແຍກອອກຕ່າງຫາກ ເພື່ອເຮັດໃຫ້ການແກ້ໄຂບັນຫາດັ່ງກ່າວງ່າຍຂຶ້ນ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 2270, 2270-1 ແລະ 2270-2 ຂອງປະມວນແພ່ງຝຣັ່ງ ປີ 2006; ມາດຕາ 166 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 314, 315, 317 ແລະ 427 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 53 ການພິຈາລະນາກ່ຽວກັບອາຍຸຄວາມ

ສານ ບໍ່ສາມາດພິຈາລະນາກ່ຽວກັບອາຍຸຄວາມ ຖ້າຫາກຄູ່ຄວາມບໍ່ໄດ້ຍົກເອົາອາຍຸຄວາມມາເປັນຂໍ້ໂຕ້ແຍ່ງ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ວ່າສານຈະພິຈາລະນາກ່ຽວກັບອາຍຸຄວາມກໍຕໍ່ເມື່ອມີການຮ້ອງຂໍຈາກຄູ່ຄວາມໃນຄະດີ ມາຍັງສານເທົ່ານັ້ນ. ທັງເປັນມາດຕາທີ່ກຳນົດເພື່ອຍົກສູງເຈດຈຳນົງຂອງຜູ້ທີ່ສົມຄວນໄດ້ຮັບຜົນປະໂຫຍດຈາກອາຍຸຄວາມອີກ.

ຕົວຢ່າງ	ໃນປີ 2005 **ກ** ໄດ້ຮ້ອງຟ້ອງເອົາຄ່າເສຍຫາຍຈາກ **ຂ** ຍ້ອນ **ຂ** ໄດ້ເຮັດໃຫ້ໄຟໄໝ້ເລົ້າເຂົ້າຂອງ **ກ** ແຕ່ປີ 2000 ຜ່ານມາ **ກ** ບໍ່ເຄີຍທວງຖາມເອົາຄ່າເສຍຫາຍດັ່ງກ່າວຈາກ **ຂ** ຖ້າ **ຂ** ຕ້ອງການໃຫ້ສານພິຈາລະນາວ່າສິດທວງຂອງ **ກ** ໝົດແລ້ວນັ້ນ **ຂ** ຕ້ອງສະເໜີໃນຄຳແກ້ຟ້ອງຂອງຕົນວ່າຂໍໃຫ້ສານພິຈາລະນາວ່າອາຍຸຄວາມໄດ້ໝົດແລ້ວ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງໃໝ່ ຍ້ອນວ່າຜ່ານມາຜູ້ພິພາກສາບາງທ່ານຍັງເຂົ້າໃຈວ່າ ສານຕ້ອງໄດ້ພິຈາລະນາກ່ຽວກັບອາຍຸຄວາມໂດຍໜ້າທີ່ ຊຶ່ງບໍ່ຈຳເປັນຕ້ອງມີການຮ້ອງຂໍຂອງຄູ່ຄວາມ. ດັ່ງນັ້ນ, ມາດຕານີ້ໄດ້ກຳນົດໄວ້ເພື່ອຍົກສູງເຈດຈຳນົງຂອງຜູ້ທີ່ສົມຄວນໄດ້ຮັບຜົນປະໂຫຍດຈາກອາຍຸຄວາມອີກ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 193/29 ຂອງປະມວນກົດໝາຍແພ່ງ ແລະ ພານິດໄທ; ມາດຕາ 145 ຂອງປະມວນກົດໝາຍແພ່ງ ຍີ່ປຸ່ນ.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 54 ການບໍ່ອະນຸຍາດໃຫ້ປ່ຽນແປງອາຍຸຄວາມ

ອາຍຸຄວາມ ທີ່ໄດ້ກຳນົດໄວ້ໃນປະມວນກົດໝາຍສະບັບນີ້ ບໍ່ອະນຸຍາດໃຫ້ປ່ຽນແປງ.

ຈຸດປະສົງ	ເພື່ອກຳນົດເຮັດໃຫ້ຜູ້ນຳໃຊ້ ຫຼື ຄູ່ສັນຍາບໍ່ສາມາດປ່ຽນແປງອາຍຸຄວາມ ທີ່ກົດໝາຍໄດ້ກຳນົດໄວ້ ເພາະຖ້າອານຸຍາດໃຫ້ສາມາດປ່ຽນແປງກ່ຽວກັບໄລຍະຂອງອາຍຸຄວາມ ກໍຈະຖືເປັນການຍອມຮັບໃຫ້ເຈົ້າໜີ້ສາມາດແກ່ຍາວຂອງອາຍຸຄວາມອອກໄປ ສຳລັບລູກໜີ້ທີ່ເປັນຜູ້ຢູ່ໃນສະຖານະດ້ອຍແລ້ວ, ເປັນການເຮັດໃຫ້ລູກໜີ້ ຖືກອັບປະໂຫຍດແຕ່ຝ່າຍດຽວ.
ຕົວຢ່າງ	**ຂ** ມາຮ້ອງຂໍເພື່ອຢືມເງິນນຳ **ກ** ຈຳນວນ 10.000.0000 ກີບ ກຳນົດເວລາໜຶ່ງປີ ເພື່ອນຳໄປເຮັດທຸລະກິດ. ຊຶ່ງ **ກ** ກໍຕົກລົງໃຫ້ຢືມດ້ວຍອັດຕາດອກເບ້ຍ 10% ຕໍ່ປີ. ແຕ່ **ກ** ແລະ **ຂ** ໄດ້ຕົກລົງກັນໄວ້ສຳລັບ ສິດທວງເງິນຄືນ ວ່າຈະບໍ່ນຳໃຊ້ຂໍ້ກຳນົດກ່ຽວກັບອາຍຸຄວາມເສຍສິດທີ່ກຳນົດໄວ້ໃນມາດຕາ 52 ຂອງປະມວນກົດໝາຍແພ່ງ. ການຕົກລົງບໍ່ນຳໃຊ້ອາຍຸຄວາມເສຍສິດນັ້ນ ມັນໄດ້ຂັດກັບມາດຕາ 54 ຂອງປະມວນກົດໝາຍແພ່ງ ສະນັ້ນ ສິດທວງເອົາເງິນຄືນຂອງ **ກ** ນີ້ແມ່ນຈະໃຫ້ຖືກອາຍຸຄວາມເສຍສິດ ແມ່ນຕ້ອງນັບແຕ່ມື້ກຳນົດໃຊ້ແທນເງິນຄືນໃຫ້ **ກ** ເປັນຕົ້ນມາ ເປັນເວລາ 3 ປີ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງໃໝ່ ເພື່ອໃຫ້ທຸກຄົນປະຕິບັດຕາມກົດໝາຍ ແລະ ຈະເປັນການປົກປ້ອງສິດຂອງລູກໜີ້ຜູ້ທີ່ຮູ້ເທົ່າບໍ່ເຖິງການ ແລະ ເພື່ອປ້ອງກັນບໍ່ໃຫ້ເຈົ້າໜີ້ລະເມີດກົດໝາຍ.

ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 146 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ ຜົນປະໂຫຍດຂອງອາຍຸຄວາມ ຈະສະລະລ່ວງໜ້າບໍ່ໄດ້; ມາດຕາ193/11 ຂອງປະມວນແພ່ງ ແລະ ພານິດໄທ ອາຍຸຄວາມທີ່ກົດໝາຍ ກຳນົດໄວ້ນັ້ນ ຄູ່ກໍລະນີຈະຕົກລົງກັນໃຫ້ງົດໃຊ້ ຫຼື ຂະຫຍາຍອອກບໍ່ໄດ້.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 55 ການຮັບຮູ້ໜີ້ສິນ ຫຼື ພັນທະອື່ນພາຍຫຼັງໝົດອາຍຸຄວາມ

ການຮັບຮູ້ ໜີ້ສິນ ຫຼື ພັນທະອື່ນ ຂອງລູກໜີ້ ພາຍຫຼັງໝົດອາຍຸຄວາມແລ້ວ ໜີ້ສິນ ຫຼື ພັນທະ ດັ່ງກ່າວ ຍັງຈະສືບຕໍ່ປະຕິບັດຈົນກວ່າຈະໝົດອາຍຸຄວາມ ໂດຍເລີ່ມແຕ່ວັນຮັບຮູ້ໜີ້ສິນ ເປັນຕົ້ນໄປ.

ກໍລະນີວັກ 1 ຂອງມາດຕານີ້ ຈະບໍ່ມີຜົນປະຕິບັດຕໍ່ບຸກຄົນທີສາມ ເຊັ່ນ ຜູ້ຄ້ຳປະກັນ.

ການເຫັນດີສົ່ງຊັບຄືນໃຫ້ແກ່ເຈົ້າກຳມະສິດເດີມຂອງຜູ້ຄອບຄອງ ພາຍຫຼັງໝົດອາຍຸຄວາມ ແລ້ວ ຊັບດັ່ງກ່າວ ຈະຮັບຮູ້ເປັນຂອງເຈົ້າກຳມະສິດເດີມ.

ຈຸດປະສົງ	ເພື່ອສ້າງຄວາມເຊື່ອໝັ້ນ ພາຍຫຼັງທີ່ຄົບກຳນົດອາຍຸຄວາມເສຍສິດແລ້ວ ແຕ່ຜູ້ມີພັນທະມີການຮັບຮູ້ ຫຼື ພາຍຫຼັງທີ່ຄົບອາຍຸຄວາມໄດ້ສິດແລ້ວ ແຕ່ມີການສົ່ງຊັບຄືນໃຫ້ເຈົ້າຂອງກຳມະສິດເດີມນັ້ນ ສຳລັບເຈົ້າໜີ້ກໍຄືເຈົ້າກຳມະສິດແລ້ວຖືເປັນເໝືອນການເຊື່ອໝັ້ນວ່າລູກໜີ້ຈະຍັງປະຕິບັດພັນທະ, ເປັນການເຊື່ອໝັ້ນວ່າຈະບໍ່ນຳໃຊ້ອາຍຸຄວາມ ສະນັ້ນ ມາດຕານີ້ ຈຶ່ງເປັນມາດຕາທີ່ກຳນົດ ເພື່ອປົກປ້ອງຄວາມເຊື່ອໝັ້ນດັ່ງກ່າວນັ້ນ.
ຕົວຢ່າງ	1. **ຂ** ໄດ້ກູ້ຢືມເງິນ ຈາກ **ກ** ຊຶ່ງມີກຳນົດການໃຊ້ແທນ ຄືນໃນປີ 2010 ຊຶ່ງ ມີ **ຄ** ຄ້ຳປະກັນຕໍ່ໜີ້ດັ່ງກ່າວ ເມື່ອມາຮອດປີ 2015 **ກ** ຈຶ່ງມາທວງເອົາ ເງິນຈາກ **ຂ** ແລະ **ຂ** ກໍໄດ້ບອກວ່າຕົນຍັງຕິດໜີ້ແທ້ ແລະ ເຫັນດີໃຊ້ ແທນຄືນ ໝາຍຄວາມວ່າ ອາຍຸຄວາມສາມປີ ໄດ້ໝົດແລ້ວ ແຕ່ຍ້ອນ **ຂ** ຍັງຮັບຮູ້ ແລະ ເຫັນດີໃຊ້ແທນຄືນແກ່ **ກ** ເຖິງວ່າອາຍຸຄວາມໄດ້ການມາ ກຳຕາມ ການໄລ່ອາຍຸຄວາມຈະຕ້ອງໄດ້ເລີ່ມໃໝ່ນັບແຕ່ມື້ທີ່ **ຂ** ຮັບຮູ້ ແລະ ເຫັນດີໃຊ້ແທນຄືນເປັນຕົ້ນໄປຕື່ມອີກ ການຮັບຮູ້ດັ່ງກ່າວຂອງ **ຂ** ຈະບໍ່ມີ ຜົນຕໍ່ **ຄ** ແລະ **ຄ** ບໍ່ມີພັນທະໃນການຄ້ຳປະກັນອີກ. 2. **ກ** ໄດ້ລ້ຽງງົວ ຂອງ **ຂ** ທີ່ຫຼົງມາຢູ່ນຳຝູງງົວຂອງຕົນ ມາໄດ້ ຫົກປີ ແລ້ວ ຈາກນັ້ນ **ຂ** ໄດ້ໄປທວງເອົາງົວຄືນ ແລະ **ກ** ໄດ້ເຫັນດີສົ່ງໃຫ້ **ຂ** ການ ເຫັນດີສົ່ງດັ່ງກ່າວຖືວ່າງົວດັ່ງກ່າວເປັນຊັບຂອງ **ຂ** ນັບແຕ່ວັນນັ້ນເໝືອນ ເດີມແຕ່ການທີ່ **ຂ** ໄດ້ງົວຄືນນັ້ນບໍ່ແມ່ນການໄດ້ມາຊຶ່ງກຳມະສິດ ເພາະງົວ ດັ່ງກ່າວເປັນຂອງ **ຂ** ຢູ່ແລ້ວ ບໍ່ແມ່ນການເກີດສິດຍ້ອນກໍລະນີດັ່ງກ່າວນີ້ ກໍລະນີຜົນຂອງອາຍຸຄວາມໄດ້ສິດຂອງ **ກ** ບໍ່ໄດ້ນຳໃຊ້. ດັ່ງນັ້ນ, ບໍ່ແມ່ນ ຜົນຂອງອາຍຸຄວາມ.

	ໃນເມື່ອ **ຂ** ບໍ່ສະເໜີໃນການນຳໃຊ້ອາຍຸຄວາມ ກຳມະສິດຕໍ່ໂມງຂອງ **ກ** ຍັງບໍ່ຖືກເສຍໄປ ຈຶ່ງຖືວ່າ **ກ** ຍັງມີກຳມະສິດເໝືອນເດີມ. (ມາດຕາ 53 ປະມວນກົດໝາຍແພ່ງ)
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງໃໝ່ເພື່ອໃຫ້ຮູ້ເຖິງຜົນສະທ້ອນພາຍຫຼັງອາຍຸຄວາມໄດ້ໝົດແລ້ວ. **ວັກ 2** ການຮັບຮູ້ຂອງຜູ້ມີພັນທະນີ້ຈະບໍ່ກວມເອົາບຸກຄົນທີສາມ ເຊັ່ນ ຜູ້ຄ້ຳປະກັນ. **ວັກ 3** ເພື່ອໃຫ້ຮູ້ວ່າການຕົກລົງພາຍຫຼັງອາຍຸຄວາມກຳມີຜົນສັກສິດ ບັນຫາການເສຍສິດຕາມອາຍຸຄວາມໄດ້ມີຄວາມຄິດເຫັນໃນ ສອງແງ່ຄື: 1. ໃນເມື່ອຜູ້ຄອບຄອງຊັບໄດ້ຄອບຄອງຄົບກຳນົດເວລາ ຂອງອາຍຸຄວາມ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍແລ້ວ ຜູ້ຄອບຄອງຈະໄດ້ສິດຕໍ່ຊັບດັ່ງກ່າວ ກົງກັນຂ້າມ ເຈົ້າກຳມະສິດເດີມໄດ້ເສຍສິດຕໍ່ຊັບດັ່ງກ່າວ ເຖິງວ່າຜູ້ຄອບຄອງຈະປະຕິເສດບໍ່ເອົາຊັບດັ່ງກ່າວກໍຕາມ. 2. ໃນເມື່ອຜູ້ຄອບຄອງຊັບໄດ້ຄອບຄອງຄົບກຳນົດເວລາ ຂອງອາຍຸຄວາມ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍແລ້ວ ຖ້າຜູ້ຄອບຄອງປະຕິເສດບໍ່ເອົາຊັບ ດັ່ງກ່າວ ເຈົ້າກຳມະສິດເດີມບໍ່ໄດ້ເສຍສິດຕໍ່ຊັບດັ່ງກ່າວ ໝາຍຄວາມວ່າ ຍັງເປັນເຈົ້າກຳມະສິດຢ່າງຕໍ່ເນື່ອງ ບໍ່ໄດ້ເສຍສິດຕໍ່ຊັບທີ່ມີບຸກຄົນອື່ນຄອງ ນັ້ນ. ຊຶ່ງອີງຕາມມາດຕາ 53 ໄດ້ກຳນົດໄວ້ວ່າ ການໄດ້ສິດຕາມອາຍຸຄວາມ ຜູ້ຄອບຄອງຊັບຕ້ອງໄດ້ສະເໜີອາຍຸຄວາມເປັນຂໍ້ໂຕ້ແຍ່ງ ສານຈຶ່ງສາມາດ ພິຈາລະນາໄດ້ ຊຶ່ງສອດຄ່ອງຕາມມາດຕາ 20 ຂອງກົດໝາຍວ່າດ້ວຍ ການດຳເນີນຄະດີແພ່ງ ສານຈະບໍ່ສາມາດພິຈາລະນາບັນຫາທີ່ໂຈດ ແລະ ຈຳເລີຍບໍ່ໄດ້ສະເໜີໃຫ້ສານພິຈາລະນາ. **ຕົວຢ່າງ 1**: **ກ** ໄດ້ຄອບຄອງທີ່ດິນຂອງ **ຂ** ເປັນເວລາ 20 ປີ ຊຶ່ງ **ຂ** ມີ ໃບຕາດິນຖືກຕ້ອງຕາມກົດໝາຍ ຊຶ່ງ **ຂ** ກໍບໍ່ເຄີຍມາທັກທ້ວງ **ກ** ວ່ານຳ ໃຊ້ທີ່ດິນຂອງຕົນ ຮອດປີທີ 21 **ຂ** ຈຶ່ງມາທວງໃຫ້ **ກ** ຢຸດເຊົາການນຳໃຊ້ ທີ່ດິນຂອງຕົນ **ກ** ຈຶ່ງຕອບກັບ **ຂ** ວ່າເຫັນດີ ສິ່ງທີ່ດິນໃຫ້ **ຂ** ຄືນ ກໍລະນີດັ່ງ ກ່າວ ຖ້າ **ຂ** ເສຍສິດຕໍ່ທີ່ດິນຂອງຕົນ ໃບຕາດິນຂອງ **ຂ** ຖືວ່າຖືກລົບລ້າງ ເພາະເສຍສິດແລ້ວ ຖ້າ **ຂ** ຕ້ອງການມີກຳມະສິດທີ່ຖືກຕ້ອງ **ຂ** ຕ້ອງໄດ້ ດຳເນີນການຂຶ້ນທະບຽນ ໃໝ່ ຈຶ່ງເປັນການຖືກຕ້ອງ. **ຕົວຢ່າງ 2: ກ** ໄດ້ມີໝາຕົວໜຶ່ງ ອາຍຸ 3 ປີ ໃນປີ 2015 ໝາຕົວ ດັ່ງກ່າວໄດ້ ຫຼົງໄປກັບໝາຕົວອື່ນ ຊຶ່ງບໍ່ມີບຸກຄົນໃດຈັບໄປລ້ຽງມັນ ຈຶ່ງຫາກິນສິ່ງເສດເຫຼືອຕາມທາງ ແລະ ຫາກິນທົ່ວໄປ ມາຮອດປີ 2019 **ຂ** ໄດ້ຈັບໝາຕົວດັ່ງກ່າວໄປລ້ຽງ ມາຮອດປີ 2021 ເຈົ້າຂອງໝາໄດ້ໄປ ພົບເຫັນ ແລະ ນຳກັບຄືນມາ ການທີ່ໝາຕົວດັ່ງກ່າວໄດ້ອອກຈາກເຮືອນ ໄປລວມທັງໝົດເກີນ 5 ປີແລ້ວ ໃນກໍລະນີດັ່ງກ່າວ ຕາມອາຍຸຄວາມແມ່ນ ເກີນຫ້າປີແລ້ວ **ກ** ບໍ່ໄດ້ເສຍກຳມະສິດຕໍ່ໝາຕົວດັ່ງກ່າວ.

ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ193/24 ຂອງປະມວນແພ່ງ ແລະ ພານິດໄທ ເມື່ອອາຍຸຄວາມໝົດກຳນົດແລ້ວລູກໜີ້ຈະສະລະປະໂຫຍດອາຍຸຄວາມນັ້ນກໍໄດ້ ແຕ່ການສະລະນັ້ນ ຕ້ອງບໍ່ໃຫ້ມີຜົນກະທົບເຖິງສິດທິຂອງບຸກຄົນພາຍນອກ ຫຼື ຜູ້ຄ້ຳປະກັນ.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 56 ການບໍ່ມີອາຍຸຄວາມ

ການບໍ່ມີອາຍຸຄວາມ ມີກໍລະນີ ດັ່ງນີ້:

1. ການທວງເອົາຊັບຂອງລັດ;
2. ການທວງໃຫ້ປະຕິບັດພັນທະຕໍ່ລັດ ເວັ້ນເສຍແຕ່ ກົດໝາຍຫາກໄດ້ກຳນົດໄວ້ເປັນຢ່າງອື່ນ;
3. ການທວງເພື່ອປົກປ້ອງສິດສ່ວນບຸກຄົນ ທີ່ບໍ່ມີລັກສະນະຊັບສົມບັດ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ວ່າ ມີບາງສິດ ບໍ່ສາມາດນຳໃຊ້ອາຍຸຄວາມໄດ້.
ຕົວຢ່າງ	1. **ກ** ໄດ້ຄອບຄອງທີ່ດິນຂອງລັດ ມາໄດ້ເກີນກວ່າ 20 ປີ ແລ້ວເຖິງວ່າຜູ້ກ່ຽວຈະຄອບຄອງດ້ວຍຄວາມຕໍ່ເນື່ອງ, ເປີດເຜີຍ, ບໍລິສຸດໃຈຄືກັບຕົນເອງເປັນເຈົ້າຂອງກໍຕາມ ຈະບໍ່ໄດ້ສິດໃນທີ່ດິນຕອນດັ່ງກ່າວ. 2. **ກ** ຕິດຄ້າງຈ່າຍອາກອນທຸລະກິດໃຫ້ລັດເຖິງວ່າ ອາຍຸຄວາມຕາມກົດໝາຍ 3 ປີ ຈະສິ້ນສຸດລົງຕາມມາດຕາ 52 ແລ້ວກໍຕາມ ລັດຈະບໍ່ເສຍສິດໃນການທວງເອົາ. 3. **ກ** ໄດ້ທວງໃຫ້ **ຂ** ປ່ຽນນາມສະກຸນອອກຈາກນາມສະກຸນຂອງຕົນ ຍ້ອນວ່າເວລາເປັນຄູ່ຜົວເມຍ **ຂ** ໄດ້ໃສ່ນາມສະກຸນ ຂອງ **ກ** ການທວງດັ່ງກ່າວ ຂອງຜົວ ຫຼື ເມຍທີ່ໄດ້ຢ່າຮ້າງກັນແລ້ວ ຊຶ່ງໄດ້ໃສ່ນາມສະກຸນຂອງອີກຝ່າຍໜຶ່ງ ໃນເວລາເປັນຜົວເມຍກັນ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງໃໝ່ ຍ້ອນວ່າມາດຕາ 8 ແລະ 42 ກົດໝາຍວ່າດ້ວຍກຳມະສິດ ໄດ້ກຳນົດໄວ້ຊຶ່ງກຳນົດລວມກັບການໄດ້ສິດອາຍຸຄວາມອື່ນຈຶ່ງເຮັດໃຫ້ເຂົ້າໃຈຍາກ ແລະ ໃຊ້ຍາກ. ປະມວນກົດໝາຍຂອງຫຼາຍປະເທດໄດ້ກຳນົດແຈ້ງ ຈຶ່ງໄດ້ກຳນົດເປັນມາດຕາຕ່າງຫາກເພື່ອໃຫ້ເຫັນແຈ້ງຂໍ້ຍົກເວັ້ນໃນການນຳໃຊ້ອາຍຸຄວາມ ໃນການປົກປ້ອງສິດ ແລະ ຜົນປະໂຫຍດຂອງລັດ ແລະ ສິດສ່ວນບຸກຄົນ ຫຼື ເດັກ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 155 ຂອງປະມວນກົດໝາຍແພ່ງຫວຽດນາມປີ 2015.

ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ຂ. ການນັບອາຍຸຄວາມ

ມາດຕາ 57 ການນັບອາຍຸຄວາມ

ອາຍຸຄວາມ ໃຫ້ນັບຕາມແຕ່ລະກໍລະນີ ດັ່ງນີ້:

1. ການໄດ້ສິດ ໃຫ້ເລີ່ມນັບແຕ່ວັນເຂົ້າຄອບຄອງເປັນຕົ້ນໄປ ຈົນຄົບກຳນົດອາຍຸຄວາມ;
2. ການເສຍສິດ ໃຫ້ເລີ່ມນັບແຕ່ວັນທີສາມາດນຳໃຊ້ສິດທວງ ເປັນຕົ້ນໄປ ຈົນໝົດກຳນົດ ອາຍຸຄວາມ.

ໃນກໍລະນີຜູ້ມີພັນທະ ຫາກໄດ້ເອົາຕົວຫຼົບໜີນັ້ນ ອາຍຸຄວາມໃຫ້ເລີ່ມນັບແຕ່ວັນທີຜູ້ມີສິດໄດ້ຮູ້ຂ່າວ ຫຼື ຄວນຈະຮູ້, ໄດ້ເຫັນ ຫຼື ຄວນຈະເຫັນ ຫຼື ຮູ້ບ່ອນຢູ່ສຸດທ້າຍຂອງຜູ້ກ່ຽວ ເປັນຕົ້ນໄປ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນກ່ຽວກັບການເລີ່ມນັບ ແລະ ວິທີຄິດໄລ່ໄລຍະເວລາຂອງ ກໍລະນີອາຍຸຄວາມໄດ້ສິດ ກັບ ອາຍຸຄວາມເສຍສິດ.
ຕົວຢ່າງ	**1. ກ** ໄດ້ຄອບຄອງທີ່ດິນໜຶ່ງຕອນ ມາແຕ່ວັນທີ 20 ກໍລະກົດ 1970 ເປັນຕົ້ນມາ ການນັບໃຫ້ເລີ່ມນັບແຕ່ ວັນທີຜູ້ກ່ຽວໄດ້ເຂົ້າຄອບຄອງຄືແຕ່ວັນທີ 20 ກໍລະກົດ 1970 ຈົນຮອດ ຊາວ ປີ ແລ້ວ ຈຶ່ງຈະໄດ້ສິດ. **2.** ງົວ ຂອງ **ກ** ໄດ້ໄປກິນເຂົ້ານາຂອງ **ຂ** ໃນມື້ວັນທີ 1 ມີຖຸນາ 2014 ສິດໃນການທວງຄ່າເສຍຫາຍຂອງ **ຂ** ແມ່ນໃຫ້ນັບແຕ່ ວັນທີງົວໄປກິນເຂົ້ານານັ້ນເປັນຕົ້ນມາຈົນຮອດ ສາມປີ. **3. ກ** ໄດ້ນຳລົດຍີ່ຫໍ້ A ໄປສ້ອມແປງທີ່ຮ້ານສ້ອມແປງຂອງ **ຂ** ໂດຍໄດ້ຕົກລົງໃຫ້ປ່ຽນອາໄຫຼ່ຍີ່ຫໍ້ A ຂອງແທ້ໃສ່ ໃນເວລາສ້ອມແປງ **ຂ** ໄດ້ເອົາອາໄຫຼ່ຂອງທຽມໃສ່ໃຫ້ **ກ** ກໍໄດ້ນຳໃຊ້ລົດມາໄດ້ ສາມເດືອນລົດມີບັນຫາ ຈຶ່ງໄດນຳລົດໄປສ້ອມແປງທີ່ຮ້ານຂອງ **ຄ** ຈຶ່ງຮູ້ວ່າ **ຂ** ບໍ່ໄດ້ເອົາອາໄຫຼ່ຂອງແທ້ໃສ່ໃນເວລາສ້ອມແປງຢູ່ຮ້ານ ຂອງ **ຂ** ອາຍຸຄວາມຈະເລີ່ມຄິດໄລ່ນັບແຕ່ເວລາທີ່ **ກ** ໄດ້ຮູ້ວ່າ **ຂ** ໄດ້ເອົາອາໄຫຼ່ຂອງທຽມໃສ່ລົດຂອງ **ກ** ໃນເວລາ **ຂ** ສ້ອມແປງນັ້ນ. **4.** ໃນວັນທີ 4 ກໍລະກົດ 2015 **ກ** ໄດ້ເຮັດໃຫ້ໄຟໄໝ້ສວນຂອງ **ຂ**, **ກ** ໄດ້ຍິນຍອມໃຊ້ແທນ **ຂ** ແຕ່ **ກ** ຂໍເວລາ ຫາເງິນກ່ອນ, ຕໍ່ມາ **ກ** ໄດ້ລົບໜີໄປຢູ່ແຂວງອື່ນ ເພື່ອຫຼົບຫຼີກການໃຊ້ແທນຄ່າເສຍຫາຍໃຫ້ **ຂ**. ມາຮອດ 4 ປີ **ຂ** ຈຶ່ງຮູ້ຂ່າວວ່າ **ກ** ໄປຢູ່ຕ່າງແຂວງນັ້ນ. ອາຍຸຄວາມໃນການທວງເອົາຄ່າເສຍຫາຍແມ່ນເລີ່ມນັ້ບແຕ່ ວັນທີ **ຂ**ໄດ້ຮູ້ບ່ອນຢູ່ຂອງ **ກ** ເປັນຕົ້ນໄປ.

ເຫດຜົນການສ້າງໃໝ່	ມາດຕານີ້ສ້າງໃໝ່ເພື່ອແກ້ໄຂຂໍ້ສົງໄສກ່ຽວກັບການນັບ ຊຶ່ງໃນຜ່ານມາມີການສົງໄສວ່າຈະເລີ່ມວັນໃດ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 151 ຂອງປະມວນກົດໝາຍຫວຽດນາມປີ 2015.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສານໄດ້ນຳໃຊ້ວິທີດັ່ງກ່າວນີ້ເຂົ້າໃນການນັບອາຍຸຄວາມ

ມາດຕາ 58 ການນັບອາຍຸຄວາມດ້ວຍການຄອບຄອງຕໍ່ ຂອງບຸກຄົນຜູ້ໃໝ່

ອາຍຸຄວາມດ້ວຍການຄອບຄອງຕໍ່ຂອງບຸກຄົນຜູ້ໃໝ່ ໃຫ້ເລີ່ມນັບແຕ່ວັນເຂົ້າຄອບຄອງຂອງຜູ້ທຳອິດ ເປັນຕົ້ນໄປ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ວິທີການນັບອາຍຸຄວາມ ໃນເວລາທີ່ມີການຄອບຄອງຕໍ່ຂອງບຸກຄົນອື່ນ.
ຕົວຢ່າງ	**ກ** ໄດ້ຄອບຄອງທີ່ດິນໜຶ່ງຕອນມາເປັນເວລາ 10 ປີແລ້ວ ຈຶ່ງໄດ້ມອບໃຫ້ **ຂ** ຄອບຄອງຕໍ່ອີກ **10** ປີຖືວ່າຄົບອາຍຸຄວາມຍ້ອນວ່າການນັບອາຍຸຄວາມແມ່ນໃຫ້ນັບແຕ່ມື້ທີ່ **ກ** ຄອບຄອງເປັນຕົ້ນມາ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກມາດຕາ 42 ກົດໝາຍວ່າດ້ວຍກຳມະສິດ, ການປັບປຸງມາເປັນມາດຕາຕ່າງຫາກ ເພື່ອໃຫ້ນຳໃຊ້ສະດວກ ແລະ ເຂົ້າໃຈໄດ້ງ່າຍຂຶ້ນ ກໍເນື່ອງຈາກວ່າກົດໝາຍປັດຈຸບັນຂຽນລວມຢູ່ໃນມາດຕາດຽວ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 187 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ຄ. ການໂຈະ ແລະ ການຢຸດສະງັກ

ມາດຕາ 59 ການໂຈະອາຍຸຄວາມ

ການໂຈະອາຍຸຄວາມ ແມ່ນການຢຸດເຊົາອາຍຸຄວາມໄວ້ຊົ່ວຄາວ ຍ້ອນມີເຫດການໃດໜຶ່ງເກີດຂຶ້ນ ຊຶ່ງເປັນອຸປະສັກຕໍ່ການທວງ ຫຼື ການຮ້ອງຟ້ອງ ເຊັ່ນ ການຫຼົບໜີຂອງລູກໜີ້, ນ້ຳຖ້ວມ, ແຜ່ນດິນໄຫວ.

ການໂຈະອາຍຸຄວາມ ໃຫ້ເລີ່ມນັບແຕ່ວັນເກີດເຫດການ ຈົນຮອດວັນສິ້ນສຸດເຫດການ ຫຼື ຕາມການປະກາດທາງການກ່ຽວກັບເຫດການນັ້ນ.

ໄລຍະເວລາທີ່ໂຈະບໍ່ໃຫ້ນັບເຂົ້າໃນອາຍຸຄວາມ, ສ່ວນໄລຍະເວລາກ່ອນການໂຈະອາຍຸຄວາມ ຈະຖືກນັບລວມເຂົ້າກັບໄລຍະເວລາທີ່ໄດ້ສືບຕໍ່ ພາຍຫຼັງການໂຈະນັ້ນໄດ້ສິ້ນສຸດລົງ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນກ່ຽວກັບກໍລະນີເມື່ອມີເຫດການໃດໜຶ່ງພາໃຫ້ໄລຍະເວລາຂອງອາຍຸຄວາມທີ່ພວມດຳເນີນໄປນັ້ນໄດ້ຖືກໂຈະຊົ່ວຄາວ ແລະ ພາຍຫຼັງທີ່ເຫດການດັ່ງກ່າວໄດ້ສິ້ນສຸດລົງແລ້ວ ອາຍຸຄວາມຈຶ່ງຖືກນັບຕໍ່ຈາກຈຸດທີ່ໄດ້ໂຈະ.
ຕົວຢ່າງ	ໃນວັນທີ 01 ມັງກອນ 2010 **ກ** ໄດ້ ນຳທີ່ນາຂອງຕົນໄປຂາຍຝາກໄວ້ກັບ **ຂ** ແລ້ວກໍໄດ້ຍ້າຍຄອບຄົວໄປຢູ່ຕ່າງແຂວງ ມາຮອດຕົ້ນປີ 2013 ໄດ້ເກີດພະຍາດລະບາດຮ້າຍແຮງ ລັດຖະບານໄດ້ປິດເມືອງ ບໍ່ໃຫ້ປະຊາຊົນອອກເມືອງໄດ້ ເປັນເວລາ ສາມເດືອນ ນັບແຕ່ວັນທີ 01 ມັງກອນ 2013 ຫາ ວັນທີ 31 ມີນາ 2013 ໃນໄລຍະທີ່ລັດຖະບານປິດເມືອງນີ້ ອາຍຸຄວາມແມ່ນຖືກໂຈະ ແລະ ຈະຖືກສືບຕໍ່ນັບຫຼັງວັນທີ 31 ມີນາ 2013.
ເຫດຜົນໃນການປັບປຸງ	ມາດຕານີ້ໄດ້ປັບປຸງມາຈາກ ມາດຕາ 102 ວັກ 3 ຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ; ມາດຕາ 40 ກົດໝາຍວ່າດ້ວຍການສືບທອດມູນມໍລະດົກ; ເປັນມາດຕາທີ່ເຮັດໃຫ້ຈະແຈ້ງກໍລະນີ ທີ່ມີຜູ້ມີສິດຈະກ່າວອ້າງສິດຂອງຕົນເພື່ອໃຫ້ອາຍຸຄວາມຖືກໂຈະ ແຕ່ເນື່ອງຈາກວ່າເກີດພາວະສົງຄາມ, ນ້ຳຖ້ວມ, ແຜນດິນໄຫວ ລະ ອື່ນໆ ຊຶ່ງເຮັດໃຫ້ບໍ່ສາມາດອ້າງສິດນັ້ນມັນກໍເຮັດໃຫ້ເຈົ້າໜີ້ຖືກອັບປະໂຫຍດຢ່າງໃຫຍ່ຫຼວງ ສະນັ້ນ ຈຶ່ງຍອມຮັບການໂຈະອາຍຸຄວາມໃນກໍລະນີເຫຼົ່ານີ້ ແລະ ເຮັດໃຫ້ຮູ້ວ່າເກີດມີການໂຈະອາຍຸຄວາມໃນກໍລະນີເຫຼົ່ານີ້ ແລະ ເຮັດໃຫ້ຮູ້ວ່າເມື່ອເກີດມີການໂຈະແລ້ວຜົນຂອງມັນຈະເປັນແນວໃດ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 147 ວັກ 1, 148 ວັກ 1, 149-151 ແລະ 158-161 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.

ຂໍ້ມູນອື່ນຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 60 ສາເຫດຂອງການໂຈະອາຍຸຄວາມ

ອາຍຸຄວາມ ຈະຖືກໂຈະຍ້ອນເຫດການ ດັ່ງນີ້:

1. ເຫດບັງເອີນ ຫຼື ເຫດສຸດວິໄສ;
2. ຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດ ທີ່ຍັງບໍ່ທັນມີຜູ້ຕາງໜ້າຕາມກົດໝາຍ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ເຫດການຕ່າງໆທີ່ເປັນສາເຫດຂອງການໂຈະອາຍຸຄວາມ.
ຕົວຢ່າງ	1. **ກ** ຕ້ອງໄດ້ໄປທວງເງິນທີ່ **ຂ** ໄດ້ກູ້ຢືມ ກ່ອນອາຍຸຄວາມຈະໝົດ ໃນວັນທີ 31 ທັນວາ 2001. ໃນວັນທີ 30 ທັນວາ 2001 ພໍຂັບລົດໄປຮອດກາງທາງເກີດຝົນຕົກໜັກເຮັດໃຫ້ດິນເຈື່ອນມາຖົມທາງ ເຮັດໃຫ້ລົດບໍ່ສາມາດໄປຕໍ່ໄດ້ ໄດ້ນອນຢູ່ທີ່ນັ້ນເປັນເວລາ 3 ວັນ. ຈົນຮອດວັນທີ 2 ມັງກອນ 2002 ເພື່ອລໍຖ້າໜ່ວຍສ້ອມແປງມາສ້ອມແປງແລ້ວຈຶ່ງໄດ້ໄປ. ໃນໄລຍະເວລາທີ່ສ້ອມແປງທາງຍັງບໍ່ແລ້ວ 3 ວັນນັ້ນ ແມ່ນບໍ່ຖືກນັບເຂົ້າໃນອາຍຸຄວາມ. **2. ກ** ຜູ້ມີສິດສືບທອດມູນມໍຣະດົກຂອງພໍ່ແມ່ ແຕ່ໃນໄລຍະ 3 ປີ ທີ່ ພໍ່ ຫຼື ແມ່ໄດ້ເສຍຊີວິດນັ້ນ ຜູ້ກ່ຽວບໍ່ໄດ້ຢູ່ ຫຼື ບໍ່ສາມາດມາທວງ ຫຼື ຮ້ອງຟ້ອງ ຂໍແບ່ງໄດ້ ຍ້ອນມີສິ່ງຄາມກາງເມືອງ ໃນໄລຍະເວລາທີ່ເກີດສິ່ງຄາມນັ້ນ ອາຍຸຄວາມຈະບໍ່ຖືກນັບ ໝາຍຄວາມວ່ານັບແຕ່ມື້ເກີດສິ່ງຄາມຮອດມື້ສິ້ນສຸດ ແມ່ນບໍ່ຖືກນັບເຂົ້າ. **3. ກ** ອາຍຸໄດ້ພຽງ 17 ປີ ກັບ 6 ເດືອນ ໃນວັນທີ 15 ມີຖຸນາ 2015 ພໍ່ ກັບ ແມ່ ໄດ້ເສຍຊີວິດ ແຕ່ **ກ** ຍັງບໍ່ໄດ້ແຕ່ງຕັ້ງຜູ້ປົກຄອງ, ພໍ່ແມ່ຍັງມີມູນມໍຣະດົກ ເປັນທີ່ດິນ ແລະ ເຮືອນ ຊຶ່ງແມ່ນ **ຂ** ຜູ້ເປັນອ້າຍ ໄດ້ຄຸ້ມຄອງໄວ້ ມາຮອດວັນທີ 30 ມີຖຸນາ 2018 **ກ** ຈຶ່ງໄດ້ມາຂໍແບ່ງມູນມໍຣະດົກນຳ **ຂ** ແຕ່ຖືກ **ຂ** ປະຕິເສດວ່າ ໝົດອາຍຸຄວາມແລ້ວ **ກ** ຈຶ່ງໄດ້ອ້າງວ່າອາຍຸຄວາມຍັງບໍ່ໝົດເພາະເວລາພໍ່ແມ່ເສຍຊີວິດ ຜູ້ກ່ຽວມີອາຍຸພຽງແຕ່ 17 ປີ ກັບ 6 ເດືອນ ແລະ ໄລຍະເວລາດັ່ງກ່າວ ກໍບໍ່ໄດ້ມີຜູ້ປົກຄອງເປັນຜູ້ຕາງໜ້າ ນັບແຕ່ວັນທີພໍ່ແມ່ເສຍຊີວິດ ມາຮອດມື້ທວງກໍເປັນເວລາພຽງແຕ່ 3 ປີ ກັບ 15 ວັນ ເວລາທີ່ຜູ້ກ່ຽວຍັງບໍ່ມີຄວາມສາມາດທາງດ້ານການປະພຶດ 6 ເດືອນນັ້ນ **ກ** ມີຜູ້ຕາງ ໜ້າ ອາຍຸຄວາມຈຶ່ງບໍ່ໝົດ ໂດຍອີງຕາມມາດຕາ 608.
ເຫດຜົນໃນການປັບປຸງ	ມາດຕານີ້ໄດ້ປັບປຸງມາຈາກ ມາດຕາ 102 ຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ, ກຳນົດເອົາເດັກມາໃສ່ຍ້ອນວ່າປະມວນກົດໝາຍຂອງຕ່າງປະເທດ ຫຼາຍປະເທດກໍໄດ້ກຳນົດ ແລະ ມີຜົນດີ.

ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 147 ວັກ 1, 148 ວັກ 1 , 149-151, ແລະ 158-161 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ; ມາດຕາ 193/20-21 ຂອງປະມວນແພ່ງ ແລະ ພານິດໄທ; ມາດຕາ 496-498 ຂອງປະມວນກົດໝາຍແພ່ງກຳປູເຈຍ; ມາດຕາ 161 ຂອງປະມວນກົດໝາຍແພ່ງຫວຽດນາມ.
ມາດຕາອ້າງອີງ	ມາດຕາ 608 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 61 ການຢຸດສະງັກຂອງອາຍຸຄວາມ

ການຢຸດສະງັກຂອງອາຍຸຄວາມ ແມ່ນ ການບໍ່ນັບເອົາໄລຍະເວລາທີ່ຜ່ານມາ ເຂົ້າໃນອາຍຸຄວາມ ໃນການຮ້ອງຟ້ອງ.

ອາຍຸຄວາມຈະຢຸດສະງັກ ຍ້ອນມີສາເຫດໃດໜຶ່ງ ດັ່ງນີ້:

1. ມີການທວງ ຫຼື ການຮ້ອງຟ້ອງຂອງຜູ້ມີສິດ;
2. ມີການຮັບຮູ້ໜີ້ສິນ ຫຼື ພັນທະອື່ນຂອງຜູ້ມີພັນທະ.

ເມື່ອມີສາເຫດໃດໜຶ່ງຕາມວັກ 2 ຂອງມາດຕານີ້ ໃຫ້ເລີ່ມຕົ້ນນັບອາຍຸຄວາມໃໝ່.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ວ່າ ຖ້າມີການກະທຳໃດໜຶ່ງທີ່ແນ່ນອນ ອາຍຸຄວາມຜ່ານມາຈະ ຖືກລົບລ້າງ ແລ້ວເລີ່ມນັບໃໝ່.
ຕົວຢ່າງ	**1.** **ກ** ໄດ້ກູ້ຢືມເງິນ ຈາກ **ຂ** ພາຍຫຼັງທີ່ຮອດກຳນົດເວົາໃຊ້ແທນແລ້ວ ແຕ່ຍັງ ບໍ່ເຖິງ 3 ປີ ໃນປີ ທີ 2 **ຂ** ໄປທວງເອົາເງິນຈາກ **ກ** ນັບແຕ່ວັນທີ **ຂ** ໄປ ທວງນັ້ນ ອາຍຸຄວາມ ໄດ້ຢຸດສະງັກ ຖືວ່າໃຫ້ເລີ່ມນັບໃໝ່ນັບແຕ່ເວລາທີ່ ຖືກທວງໄປອີກ ຫຼື ຖ້າ **ຂ** ບໍ່ໄດ້ໄປທວງ ແຕ່ **ກ** ໄດ້ຮັບຮູ້ ແລະ ຍິນດີໃຊ້ ແທນເງິນຄືນແກ່ **ຂ**, ອາຍຸຄວາມກໍຢຸດສະງັກ. **2.** ພໍ່ ແລະ ແມ່ຂອງ **ກ** ແລະ **ຂ** ຖືກອຸບປະຕິເຫດ ເສຍຊີວິດພ້ອມກັນ ຊຶ່ງຍັງມີມູນມໍຣະດົກ ທີ່ຢູ່ນຳ **ກ** ເປັນທີ່ດິນໜຶ່ງຕອນ ເງິນຈຳນວນ 30.000.000 ກີບ ຫຼັງຈາກ ພໍ່ແມ່ ເສຍຊີວິດແລ້ວ ໄດ້ 2 ປີ ກັບ 6 ເດືອນ **ຂ** ໄດ້ມາຫາ **ກ** ເພື່ອຂໍແບ່ງປັນມູນຣະດົກ ຈາກ **ກ** ແຕ່ **ກ** ໄດ້ ປະຕິເສດບໍ່ຍອມແບ່ງໃຫ້ໂດຍອ້າງວ່າໄດ້ຄຸ້ມຄອງຮັກສາມາເປັນເວລາ ຍາວນານແລ້ວ ພ້ອມທັງເປັນຜູ້ລ້ຽງດູພໍ່ແມ່ ແລະ ບອກວ່າຖ້າຢາກໄດ້ໃຫ້ ໄປຟ້ອງເອົາ. ອາຍຸຄວາມໃນການຮ້ອງຟ້ອງແມ່ນຖືກຢຸດສະງັກນັບແຕ່ມື້ **ຂ** ໄດ້ໄປທວງແບ່ງປັນ ມູນມໍຣະດົກຈາກ **ກ** ນັ້ນ.

	3. ໃນວັນທີ 1 ມັງກອນ 2010 **ກ** ໄດ້ກູ້ຢືມເງິນຈາກ **ຂ** ຈຳນວນ 20.000.000 ກີບ ກຳນົດການກູ້ຢືມ 01 ປີ ພາຍຫຼັງໝົດກຳນົດການກູ້ຢືມ **ຂ** ກໍບໍ່ໄດ້ໄປທວງເອົາ ຈົນຮອດ ວັນທີ 01 ມີຖຸນາ 2013 **ຂ** ຈຶ່ງໄປ ຖາມເອົາເງິນຄືນ ເວລາທີ່ **ຂ** ໄປຖາມນັ້ນ **ກ** ຮັບຮູ້ ແລະ ເຫັນດີໃຊ້ແທນ ຄືນ ພາຍຫຼັງມີການຮັບຮູ້ແລ້ວ ອາຍຸຄວາມ ແມ່ນຖືກຢຸດສະງັກ ນັບແຕ່ ວັນນັ້ນ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງໃໝ່ເພື່ອໃຫ້ຜູ້ໃຊ້ແຍກຈາກການໂຈະໄດ້ງ່າຍ ແລະ ປະມວນແພ່ງ ຂອງຫຼາຍປະເທດກໍແຍກອອກຕ່າງຫາກ.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງ ຂອງປະເທດອື່ນ	ມາດຕາ 2242-2247(ການໂຈະ) 2248 ການຢຸດສະງັກ, 2550, 2534 ຂອງ ປະມວນແພ່ງຝຣັ່ງ; ມາດຕາ 193/14-15 ຂອງປະມວນແພ່ງ ແລະ ພານິດຂອງໄທ; ມາດຕາ 147 ວັກ 2, 148 ວັກ 2, ແລະ 152 ຂອງປະມວນກົດໝາຍແພ່ງ ຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 62 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 62 ຜົນສະທ້ອນຂອງການຢຸດສະງັກອາຍຸຄວາມ

ການຢຸດສະງັກອາຍຸຄວາມ ຈະມີຜົນສະທ້ອນສະເພາະແຕ່ຄູ່ກໍລະນີ ແລະ ຜູ້ສືບທອດຂອງຜູ້ ກ່ຽວ ເທົ່ານັ້ນ.

ການທວງ, ການຮ້ອງຟ້ອງຮ່ວມຜູ້ໃດຜູ້ໜຶ່ງ ຈະພາໃຫ້ອາຍຸຄວາມຢຸດສະງັກ ສຳລັບຜູ້ມີສິດ ຮ່ວມອື່ນ ເຊັ່ນດຽວກັນ.

ການທວງ, ການຮ້ອງຟ້ອງຕໍ່ລູກໜີ້ ຈະພາໃຫ້ອາຍຸຄວາມຢຸດສະງັກ ສຳລັບຜູ້ຄ້ຳປະກັນ.

ການຮັບຮູ້ ຫຼື ການໃຊ້ແທນໜີ້ສິນຂອງໜຶ່ງໃນບັນດາລູກໜີ້ຮ່ວມ ຈະພາໃຫ້ອາຍຸຄວາມຢຸດ ສະງັກ ສຳລັບລູກໜີ້ຮ່ວມອື່ນທັງໝົດ.

ການທວງມູນມໍຣະດົກຂອງໜຶ່ງໃນບັນດາຜູ້ສືບທອດມູນມໍຣະດົກຮ່ວມ ຫຼື ການຮັບຮູ້ສິດຂອງ ຜູ້ສືບ ທອດມູນມໍຣະດົກຜູ້ໃດໜຶ່ງ ຈະພາໃຫ້ອາຍຸຄວາມຢຸດສະງັກສຳລັບຜູ້ສືບທອດຮ່ວມອື່ນ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ວ່າໃນກໍລະນີອາຍຸຄວາມຢຸດສະງັກ ຈະມີຜົນຕໍ່ບຸກຄົນໃດແດ່ທີ່ ກ່ຽວຂ້ອງ.

ຕົວຢ່າງ	**1. ກ** ໄດ້ກູ້ຢືມເງິນ ຈາກ **ຂ** ພາຍຫຼັງທີ່ຮອດກຳນົດເວລາໃຊ້ແທນແລ້ວ ແຕ່ຍັງບໍ່ເຖິງ 3 ປີ ໃນປີ ທີ 2 **ຂ** ໄດ້ໄປທວງເອົາເງິນຈາກ **ກ** ນັບແຕ່ວັນທີ **ຂ** ໄປ ທວງນັ້ນ ອາຍຸຄວາມໄດ້ຢຸດສະງັກ ຖືວ່າໄດ້ເລີ່ມນັບໃໝ່ນັບແຕ່ເວລານີ້ໄປ, ໃນກໍລະນີ **ກ** ເສຍຊີວິດ ການຢຸດສະງັກດັ່ງກ່າວ ກໍຈະມີຜົນຫາລູກຂອງ **ກ** ຜູ້ທີ່ຮັບມູນມໍຣະດົກເທົ່ານັ້ນ. **2. ກ** ແລະ **ຂ** ໄດ້ມີກຳມະສິດຮ່ວມໃນທີ່ດິນໜຶ່ງຕອນ ແຕ່ທີ່ດິນດັ່ງກ່າວໄດ້ມີ **ຄ** ເຂົ້າມາຄອບຄອງນຳໃຊ້ ຖ້າ **ກ** ຫຼື **ຂ** ໄປທວງກັບທ້າວ **ຄ** ອາຍຸຄວາມຈະມີຜົນທັງ **ກ** ແລະ **ຂ.** **3. ກ** ໄດ້ກູ້ຢືມເງິນ ຈາກ **ຂ** ແລະ ມີ **ຄ** ເປັນຜູ້ຄ້ຳປະກັນໜີ້ດັ່ງກ່າວ ໃນເມື່ອ **ຂ** ໄດ້ຮ້ອງຟ້ອງ **ກ** ຕໍ່ສານແລ້ວ ອາຍຸຄວາມຈະຖືກຢຸດສະງັກລວມທັງ **ຄ** ຜູ້ຄ້ຳປະກັນ ຍ້ອນວ່າຜູ້ຄ້ຳປະກັນ ເປັນຈຳເລີຍຮ່ວມໃນຄະດີ. **4. ກ, ຂ** ແລະ **ຄ** ເປັນຜູ້ມີສິດສືບທອດຮ່ວມ ແຕ່ມູນມໍຣະດົກແມ່ນ **ກ** ເປັນຜູ້ຄຸ້ມຄອງໄວ້ໃນເວລາດັ່ງກ່າວຖ້າ **ຂ** ໄປທວງຂໍແບ່ງປັນມູນມໍຣະດົກດັ່ງກ່າວຈາກທ້າວ **ກ** ແລ້ວ ອາຍຸຄວາມຈະຖືກຢຸດສະງັກລວມທັງ **ຄ** ພ້ອມ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງໃໝ່ຍ້ອນວ່າກົດໝາຍປັດຈຸບັນໄດ້ກຳນົດໄວ້ລວມໆຈຶ່ງເຮັດໃຫ້ການປະຕິບັດຍາກຈຶ່ງນຳເອົາບາງເຫດການຂອງກົດໝາຍຕ່າງປະເທດທີ່ເຫັນວ່າມີປະໂຫຍດເຂົ້າມາກຳນົດເພີ່ມເຕີມ ແລະ ເຮັດເປັນມາດຕາຕ່າງຫາກ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 148, 153 ແລະ 457 ຂອງປະມວນແພ່ງຍີ່ປຸ່ນ; ມາດຕາ 2249 ຂອງປະມວນກົດໝາຍແພ່ງຝຣັ່ງ.
ມາດຕາອ້າງອີງ	ມາດຕາ 61 ແລະ 609 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ບົດອະທິບາຍປະມວນກົດໝາຍແພ່ງ

ພາກທີ II ບຸກຄົນ ແລະ ນິຕິບຸກຄົນ
(ມາດຕາ 63-136)

ພາກທີ II
ບຸກຄົນ ແລະ ນິຕິບຸກຄົນ

ໝວດທີ 1
ບຸກຄົນ

ກ. ຄວາມສາມາດທາງດ້ານກົດໝາຍຂອງບຸກຄົນ

ມາດຕາ 63 ຄວາມສາມາດທາງດ້ານກົດໝາຍຂອງບຸກຄົນ

ຄວາມສາມາດທາງດ້ານກົດໝາຍຂອງບຸກຄົນ ແມ່ນຄວາມສາມາດຂອງບຸກຄົນໃນການມີສິດ ແລະ ພັນທະ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ນັບແຕ່ວັນບຸກຄົນນັ້ນ ເກີດອອກມາມີຊີວິດ ແລະ ສິ້ນສຸດລົງນັບແຕ່ເວລາບຸກຄົນນັ້ນເສຍຊີວິດ.

ພົນລະເມືອງລາວ ລ້ວນແຕ່ມີຄວາມສາມາດທາງດ້ານກົດໝາຍເທົ່າທຽມກັນ.

ຄົນຕ່າງປະເທດ, ຄົນຕ່າງດ້າວ ແລະ ຄົນບໍ່ມີສັນຊາດ ກໍມີຄວາມສາມາດທາງດ້ານກົດໝາຍ ຄືກັນກັບພົນລະເມືອງລາວ ເວັ້ນເສຍແຕ່ ກົດໝາຍ ຫຼື ສົນທິສັນຍາ ຫາກໄດ້ກຳນົດໄວ້ເປັນຢ່າງອື່ນ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ເຖິງຄວາມສາມາດທາງດ້ານກົດໝາຍຂອງບຸກຄົນໃນການເປັນເຈົ້າກຳຕໍ່ສິດ ແລະ ພັນທະຂອງຕົນ; ເພື່ອຮັບຮູ້ເຖິງຄວາມເທົ່າທຽມກັນ ກ່ຽວກັບຄວາມສາມາດທາງດ້ານກົດໝາຍຂອງພົນລະເມືອງລາວ, ຕ່າງປະເທດ, ຕ່າງດ້າວ ແລະ ບໍ່ມີສັນຊາດ.
ຕົວຢ່າງ	**1.** **ກ** ເກີດມາແລ້ວມີຊີວິດຢູ່ **ກ** ມີຄວາມສາມາດທາງດ້ານກົດໝາຍ ໃນການມີສິດ ແລະ ພັນທະ ຕາມກົດໝາຍນັບແຕ່ເວລາເກີດເປັນຕົ້ນມາ; **2.** **ກ** ແຕ່ງດອງກັບ **ຂ**, **ຂ** ຖືພາໄດ້ 6 ເດືອນ. **ຄ** ໄດ້ຕື່ມເຫຼົ້າເມົາແລ້ວຂັບຂີ່ລົດລະເມີດລະບຽບຈະລາจอนมาตำเอา **ก** ຜູ້ເປັນພໍ່ ເຮັດໃຫ້ **ก** ເສຍຊີວິດ. ລູກທີ່ຢູ່ໃນທ້ອງຂອງ **ข** ມີສິດສືບທອດມູນມໍຣະດົກຂອງ **ก** ຕາມກົດໝາຍ, ເວລາລູກໃນທ້ອງຍັງບໍ່ທັນເກີດ ຕາມຫຼັກການແລ້ວເປັນຜູ້ບໍ່ມີສິດ, ແຕ່ໃນມາດຕາ 574, ວັກ 1 ໄດ້ກຳນົດສະເພາະໃຫ້ເດັກທີ່ຢູ່ໃນທ້ອງທີ່ເປັນຜູ້ບໍ່ມີຄວາມສາມາດໃນການປະພຶດຜູ້ກ່ຽວ ມີສິດສືບທອດມູນມໍຣະດົກ ແລະ ຕາມປະເພນີສານຜູ້ກ່ຽວກໍມີສິດໄດ້ຮັບຄ່າລ້ຽງດູຈາກ **ຄ** ຕາມກົດໝາຍ (ແຕ່ໃນການປະຕິບັດສິດດັ່ງກ່າວ **ข** (ແມ່) ສາມາດເປັນຜູ້ຕາງໜ້າໃຫ້ລູກຂອງຕົນ ເພື່ອຮ້ອງຂໍຄ່າລ້ຽງດູດັ່ງກ່າວ) **3.** ຄົນຕ່າງປະເທດ, ຄົນຕ່າງດ້າວ ແລະ ຄົນບໍ່ມີສັນຊາດ ມີຄວາມສາມາດທາງດ້ານກົດໝາຍ ເທົ່າທຽມກັນ ກັບ ພົນລະເມືອງລາວ. ເຊັ່ນ: ການເຄື່ອນໄຫວດຳເນີນທຸລະກິດ, ການລົງທຶນຕ່າງໆ ແມ່ນມີສິດເທົ່າທຽມກັນ ຍົກເວັ້ນການມີກຳມະສິດທີ່ດິນ, ສິດຊື້ຂາຍ ສິດນຳໃຊ້ທີ່ດິນ ແລະ ສິດ **ก** ເປັນຄົນສັນຊາດ **ข** ໄດ້ມາຕັ້ງໂຮງງານປະກອບລົດຢູ່ ສປປ ລາວ **ก** ມີສິດໃນການຮັບເອົາແຮງງານລາວເຂົ້າເຮັດວຽກ ຫຼື ປຸກສ້າງຕຶກ, ໂຮງງານ ໃສ່ທີ່ດິນທີ່ໄດ້ສຳປະທານ, ມີສິດ ໄດ້ຮັບການປົກປ້ອງ

	ຕາມກົດໝາຍຂອງລາວຄື ກັບຄົນລາວ ແຕ່ **ກ** ບໍ່ມີສິດ ທີ່ຈະເປັນເຈົ້າ ກຳມະສິດທີ່ດິນໃນ ສປປ ລາວ ໄດ້ ແລ້ວ **ກ** ຈະບໍ່ມີສິດເປັນຜູ້ເລືອກ ຕັ້ງສະມາຊິກສະພາຂອງ ສປປ ລາວ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງໃໝ່ຍ້ອນວ່າມາດຕາ 16 ຂອງກົດໝາຍວ່າດ້ວຍການສືບທອດ ມູນມໍຣະດົກບໍ່ໄດ້ກຳນົດຄວາມສາມາດທາງດ້ານກົດໝາຍ ຂອງບຸກຄົນວ່າ ໄດ້ ເກີດຂຶ້ນເວລາໃດ ແລະ ສິ້ນສຸດລົງໃນເວລາໃດ.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງ ຂອງປະເທດອື່ນ	ມາດຕາ 15 ຂອງປະມວນກົດໝາຍແພ່ງ ແລະ ພານິດ ໄທ; ມາດຕາ 1 ຂອງປະມວນກົດໝາຍແພ່ງເຢຍລະມັນ; ມາດຕາ 725 ຂອງປະມວນກົດໝາຍແພ່ງຝຣັ່ງ; ມາດຕາ 3 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ; ມາດຕາ 16 ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2015.
ມາດຕາອ້າງອີງ	ມາດຕາ 195 ແລະ 574 ຂອງປະມວນກົດໝາຍແພ່ງ; ມາດຕາ 14 ແລະ 20 ຂອງກົດໝາຍວ່າດ້ວຍທະບຽນຄອບຄົວ ປີ 2018; ມາດຕາ 160 ຂອງກົດໝາຍວ່າດ້ວຍທີ່ດິນ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 64 ເນື້ອໃນຂອງຄວາມສາມາດທາງດ້ານກົດໝາຍຂອງບຸກຄົນ

ເນື້ອໃນຂອງຄວາມສາມາດທາງດ້ານກົດໝາຍຂອງບຸກຄົນແມ່ນສິດ ແລະ ພັນທະ ຕາມທີ່ໄດ້ ກຳ ນົດໄວ້ໃນກົດໝາຍ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນເນື້ອໃນຄວາມສາມາດທາງດ້ານກົດໝາຍຊຶ່ງແມ່ນຄວາມ ສາມາດໃນການມີ ສິດ ແລະ ພັນທະ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.
ຕົວຢ່າງ	**1.** **ກ** ເກີດມາ ມີຊີວິດຢູ່ແມ່ນມີຄວາມສະເໝີພາບຕໍ່ໜ້າກົດໝາຍ, ຖານະ ທາງດ້ານສັງຄົມ, ໄດ້ຮັບການສຶກສາ, ຄວາມເຊື່ອຖື ແລະ ຊົນເຜົ່າ. (ມາດຕາ 35 ຂອງລັດຖະທຳມະນູນແຫ່ງ ສປປ ລາວ) **2.** **ກ** ເກີດມາ ຈາກພໍ່ແມ່ທີ່ເປັນຄົນລາວ, ພົນລະເມືອງລາວເກີດມາມີ ພັນທະເຄົາລົບລັດຖະທຳມະນູນ ແລະ ລະບຽບກົດໝາຍ. (ມາດຕາ 47 ຂອງລັດຖະທຳມະນູນແຫ່ງ ສປປ ລາວ) **3.** **ກ** ເປັນລູກຂອງ **ຂ** ເກີດມາ ມີຊີວິດຢູ່ ນັບແຕ່ມື້ທີ່ **ກ** ເກີດມາ ແມ່ນມີ ສິດໃນການໄດ້ຮັບການລ້ຽງດູຈາກພໍ່ແມ່, ມີສິດໃນການຮັບການປິ່ນປົວ, ສືບທອດມູນມໍຣະດົກ ແລະ ມີພັນທະໃນການເສຍອາກອນລາຍໄດ້ ຖ້າ ຫາກມີລາຍໄດ້ໃດໜຶ່ງ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງໃໝ່ເພື່ອໃຫ້ຮູ້ເນື້ອໃນຄວາມສາມາດທາງດ້ານກົດໝາຍ ຂອງບຸກ ຄົນທີ່ກຳນົດໄວ້ໃນກົດໝາຍ ຊຶ່ງໃນນັ້ນ ຕົ້ນຕໍແມ່ນຄວາມສາມາດໃນການມີສິດ ແລະ ພັນທະ ຕາມທີ່ກຳນົດໄວ້ໃນກົດໝາຍ.

ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 15 ແລະ ມາດຕາ 17 (ໃໝ່) ຂອງປະມວນກົດໝາຍແພ່ງຫວຽດນາມ ໄດ້ກຳນົດເນື້ອໃນຄວາມສາມາດທາງດ້ານກົດໝາຍ ຂອງບຸກຄົນ ວ່າ: "ສິດສ່ວນຕົວທີ່ບໍ່ຕິດພັນກັບຊັບສົມບັດ ແລະ ຕິດພັນກັບຊັບສົມບັດ; ສິດຕໍ່ກຳມະສິດ, ສິດສືບທອດມູນມໍຣະດົກ ແລະ ສິດອື່ນໆ ຕໍ່ຊັບສົມບັດ; ສິດເຂົ້າຮ່ວມໃນສາຍພົວພັນທາງແພ່ງ ແລະ ມີພັນທະ ເກີດຂຶ້ນຈາກສາຍພົວພັນທາງແພ່ງ".
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ຂ.ສິດສ່ວນບຸກຄົນ

ມາດຕາ 65 ສິດສ່ວນບຸກຄົນ

ສິດສ່ວນບຸກຄົນ ແມ່ນສິດທີ່ຕິດພັນກັບບຸກຄົນ ຊຶ່ງບໍ່ສາມາດມອບ ຫຼື ໂອນໃຫ້ບຸກຄົນອື່ນ ເຊັ່ນ ສິດ ໃນການມີຊີວິດ, ໄດ້ຮັບການປົກປ້ອງທາງດ້ານຮ່າງກາຍ ແລະ ສຸຂະພາບ, ອິດສະລະພາບ, ຊື່ສຽງ, ກຽດ ສັກສີ, ລັກສະນະສະເພາະ, ຄວາມເປັນສ່ວນຕົວ ແລະ ຜົນປະໂຫຍດອື່ນ ອັນເປັນສ່ວນຕົວຂອງບຸກຄົນນັ້ນ.

ຈຸດປະສົງ	ເພື່ອກຳນົດກ່ຽວກັບສິດສ່ວນບຸກຄົນ, ນິຍາມ, ຄຸນລັກຊະນະ, ຕົວຢ່າງທີ່ເປັນຈຸດພິເສດຂອງສິດສ່ວນບຸກຄົນ.
ຕົວຢ່າງ	**ຄ** ເປັນນັກສະແດງ ຫຼື ເປັນນັກຮ້ອງ ທີ່ມີຊື່ສຽງໂດ່ງດັງ. ຊື່ສຽງໂດ່ງດັງຂອງ ຄ ນັ້ນແມ່ນຕິດພັນກັບ **ຄ** ເອງເທົ່ານັ້ນ ບໍ່ສາມາດມອບ-ໂອນ ໃຫ້ບຸກຄົນອື່ນໄດ້ ແລະ ຜູ້ສືບທອດຂອງ **ຄ** ກໍບໍ່ສາມາດສືບທອດຊື່ສຽງດັ່ງກ່າວໄດ້.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງໃໝ່ເພື່ອໃຫ້ຮູ້ກ່ຽວກັບສິດສ່ວນບຸກຄົນ ຊຶ່ງເປັນສິດສ່ວນຕົວ ທີ່ບໍ່ສາມາດມອບ ຫຼື ໂອນໃຫ້ບຸກຄົນອື່ນໄດ້. ສິດສ່ວນບຸກຄົນດັ່ງກ່າວລວມມີ: ສິດໃນການມີຊີວິດ, ການໄດ້ຮັບການປົກປ້ອງທາງດ້ານຮ່າງກາຍ ແລະ ສຸຂະພາບ, ອິດສະລະພາບ, ຊື່ສຽງ, ກຽດສັກສີ, ລັກສະນະສະເພາະ, ຄວາມເປັນສ່ວນຕົວ ແລະ ຜົນປະໂຫຍດອື່ນໆ ອັນເປັນສ່ວນຕົວຂອງບຸກຄົນນັ້ນ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 24 ແລະ 25 ວັກ1 (ໃໝ່) ຂອງປະມວນກົດໝາຍແພ່ງຫວຽດນາມ.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 66 ການປົກປ້ອງສິດສ່ວນບຸກຄົນ

ສິດສ່ວນບຸກຄົນ ແມ່ນສິດທີ່ບໍ່ມີໃຜລ່ວງລະເມີດໄດ້ ແລະ ໄດ້ຮັບການປົກປ້ອງຕາມລັດຖະທຳມະນູນ ແລະ ກົດໝາຍ.

ເມື່ອສິດສ່ວນບຸກຄົນຫາກຖືກລະເມີດ ບຸກຄົນນັ້ນ ສາມາດຟື້ນຟູສິດດ້ວຍຕົນເອງ ດ້ວຍການຮຽກຮ້ອງ ຫຼື ທວງໃຫ້ຜູ້ລະເມີດ ຢຸດຕິການລະເມີດ ແລະ ໃຫ້ຟື້ນຟູສິດນັ້ນຄືນ; ຖ້າຫາກບໍ່ໄດ້ຮັບການແກ້ໄຂ ກໍມີສິດສະເໜີ ໃຫ້ອົງການຈັດຕັ້ງທີ່ມີສິດອຳນາດແກ້ໄຂ. ນອກຈາກໃຫ້ມີການຟື້ນຟູສິດແລ້ວ ຍັງມີສິດຮຽກຮ້ອງໃຫ້ມີການໃຊ້ແທນຄ່າເສຍຫາຍຕາມກົດໝາຍ.

ຈຸດປະສົງ	ເພື່ອກຳນົດກ່ຽວກັບການບໍ່ໃຫ້ບຸກຄົນອື່ນ ລ່ວງລະເມີດສິດສ່ວນບຸກຄົນໄດ້ ແລະ ມາດຕະການຊ່ວຍເຫຼືອ ໃນກໍລະນີຫາກສິດສ່ວນບຸກຄົນຖືກລະເມີດ.
ຕົວຢ່າງ	**1.** **ຂ** ເປັນນັກຂຽນທີ່ມີຊື່ສຽງ ໄດ້ຂຽນເລື່ອງກ່ຽວກັບຊີວິດຈິງຂອງ **ຄ** ເປັນຕົວແບບ. ໃນເລື່ອງມີການທຳລາຍກຽດສັກສີຂອງ **ຄ** ຫຼາຍ ແຕ່ໃນເວລາຂຽນບໍ່ໄດ້ຮັບອະນຸຍາດຈາກ **ຄ**, ຍ້ອນຄົນນິຍົມຫຼາຍ **ຄ** ຈຶ່ງຮູ້. ກໍລະນີນີ້ **ຄ** ມີສິດຮຽກຮ້ອງໃຫ້ຢຸດເຊົາພິມປື້ມອອກຂາຍ ແລະ ຮຽກຮ້ອງເອົາຄ່າເສຍຫາຍ, ຖ້າ **ຂ** ບໍ່ປະຕິບັດຕາມການຮຽກຮ້ອງຂອງ **ຄ**, ອີງຕາມສິດສ່ວນບຸກຄົນ **ຄ** ກໍສາມາດຮ້ອງຟ້ອງຕໍ່ສານ ເພື່ອໃຫ້ສານພິຈາລະນາຕັດສິນໃຫ້ **ຂ** ຢຸດເຊົາພິມປື້ມດັ່ງກ່າວ ແລະ ໃຫ້ຈ່າຍຄ່າເສຍຫາຍໃຫ້ **ຂ.** **2.** **ກ** ເປັນນັກປະພັນເພງ ໄດ້ແຕ່ງເພງໜຶ່ງທີ່ໂດ່ງດັງ ຕໍ່ມາ **ຂ** ໄດ້ນຳເພງຂອງ **ກ** ໄປຮ້ອງ ແລະ ອັດແຜ່ນຊີດີຂາຍ ໂດຍບໍ່ໄດ້ຮັບອະນຸຍາດຈາກ **ກ** ໃນກໍລະນີນີ້ **ກ** ມີສິດຮຽກຮ້ອງໃຫ້ **ຂ** ຢຸດເຊົາ ແລະ ສາມາດຮຽກຮ້ອງຄ່າເສຍຫາຍຈາກ **ຂ** ໄດ້.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງໃໝ່ເພື່ອໃຫ້ຮູ້ວ່າ ແຕ່ລະຄົນໄດ້ສ້າງຜົນງານ ແລະ ພອນສະຫວັນແຕກຕ່າງກັນ ຕໍ່ກັບຜົນງານທີ່ຜູ້ກ່ຽວສ້າງຂຶ້ນ ແມ່ນມີສິດທີ່ຈະປົກປ້ອງເປັນຂອງຕົນເອງ ຍ້ອນຜ່ານມາໄດ້ມີກົດໝາຍວ່າດ້ວຍລິຂະສິດ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ປະດິດສ້າງຂຶ້ນມາ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 25 ຂອງປະມວນກົດໝາຍແພ່ງຫວຽດນາມ;
ມາດຕາອ້າງອີງ	ມາດຕາ 41 ຂອງລັດຖະທຳມະນູນ ສປປ ລາວ.
ຂໍ້ມູນອື່ນຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ຄ. ຄວາມສາມາດທາງດ້ານການປະພຶດຂອງບຸກຄົນ

ມາດຕາ 67 ຄວາມສາມາດທາງດ້ານການປະພຶດຂອງບຸກຄົນ

ຄວາມສາມາດທາງດ້ານການປະພຶດຂອງບຸກຄົນ ແມ່ນຄວາມສາມາດນຳໃຊ້ສິດ ແລະ ປະຕິບັດພັນທະດ້ວຍຕົນເອງ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ກ່ຽວກັບຄວາມສາມາດທາງດ້ານການປະພຶດຂອງບຸກຄົນ ແມ່ນຄວາມສາມາດໃຊ້ສິດ ແລະ ປະຕິບັດພັນທະໄດ້ດ້ວຍຕົນເອງ ກໍຄືຄວາມສາມາດໃນການກະທຳສິ່ງໃດໜຶ່ງດ້ວຍຕົນເອງ ຊຶ່ງພາໃຫ້ເກີດສິດ ແລະ ພັນທະທາງແພ່ງເກີດຂຶ້ນ, ປ່ຽນແປງ ຫຼື ສິ້ນສຸດລົງ.
ຕົວຢ່າງ	**ກ** ພົ້ນກະສຽນອາຍຸ 18 ປີ ບໍ່ຖືກຈຳກັດ ຫຼື ເສຍຄວາມສາມາດທາງດ້ານການປະພຶດຕາມຄຳຕັດສິນຂອງສານ, **ກ** ສາມາດເຊັນສັນຍາຊື້ຂາຍສິດນຳໃຊ້ທີ່ດິນ ແລະ ເຮືອນໄດ້ດ້ວຍຕົນເອງ ກັບ **ຂ** ຫຼື ເຮັດພິໃນກຳ ຫຼື ຍົກຊັບ ເອົາຊັບຂອງຕົນໃຫ້ຜູ້ອື່ນໄດ້ໂດຍບໍ່ຈຳເປັນໃຫ້ມີຜູ້ປົກຄອງເຂົ້າຮ່ວມ ພາຍຫຼັງເຊັນສັນຍາແລ້ວ **ກ** ສາມາດທວງໃຫ້ຜູ້ຂາຍໂອນທີ່ດິນ ແລະ ເຮືອນໃຫ້ຕົນ ແລະ ມີ ພັນທະ

	ຈ່າຍເງິນຕາມສັນຍາ.ຖ້າ ຂ ໄດ້ຮັບຊັບຕາມພິໄນກຳກໍມີສິດທອງໃຫ້ຜູ້ຄຸ້ມຄອງ ມອບຊັບໃຫ້ຕົນ ແລະ ມີພັນທະ ໃຊ້ແທນຄ່າຄຸ້ມຄອງຊັບ ທີ່ຜູ້ຄຸ້ມຄອງໄດ້ໃຊ້ຈ່າຍໄປກ່ອນ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 12 ວັກ 1 ຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ປີ 2008 ຄວາມສາມາດທາງດ້ານການປະພຶດຂອງບຸກຄົນ ແລະ ຄວາມສາມາດທາງດ້ານການປະພຶດຂອງການຈັດຕັ້ງ ຫຼື ນິຕິບຸກຄົນ ໄດ້ກຳນົດໄວ້ ເພື່ອໃຫ້ຮູ້ກ່ຽວກັບຄວາມສາມາດທາງດ້ານການປະພຶດຂອງບຸກຄົນ ຈຶ່ງໄດ້ແຍກຄວາມສາມາດທາງດ້ານການປະພຶດຂອງການຈັດຕັ້ງ ແລະ ນິຕິບຸກຄົນອອກໄປໄວ້ໃນໝວດນິຕິບຸກຄົນຕ່າງຫາກ ຍ້ອນວ່າຄວາມສາມາດຂອງບຸກຄົນແມ່ນຄວາມສາມາດສະເພາະຕົວທີ່ຕິດພັນກັບຕົວບຸກຄົນ ສ່ວນຄວາມສາມາດຂອງການຈັດຕັ້ງ ເກີດມີຂຶ້ນດ້ວຍສັນຍາ ຫຼື ນິຕິກຳໃດໜຶ່ງ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 16-19 ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2015.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 68 ຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດ

ຜູ້ບໍ່ມີຄວາມສາມາດທາງດ້ານປະພຶດ ແມ່ນຜູ້ບໍ່ພົ້ນກະສຽນອາຍຸ, ຜູ້ຖືກຈຳກັດ ຫຼື ເສຍຄວາມ ສາ ມາດທາງດ້ານການປະພຶດ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນພາບລວມທັງໝົດໂດຍງ່າຍ ກ່ຽວກັບປະເພດຂອງຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດ.
ຕົວຢ່າງ	**1.** **ກ** ເກີດມາອາຍຸຍັງບໍ່ເຖິງສິບແປດປີ ຊຶ່ງເປັນຜູ້ທີ່ຍັງບໍ່ພົ້ນກະສຽນອາຍຸ ທຸກການກະທຳ ຕ້ອງໄດ້ຮັບການເຫັນດີຈາກພໍ່ແມ່ ຫຼື ຜູ້ປົກຄອງ ຍົກເວັ້ນສັນຍາທີ່ມີມູນຄ່າບໍ່ສູງເຊັ່ນ: ການຊື້ອາຫານ, ເຂົ້າໜົມ...; **2.** **ກ** ເປັນຄົນຕິດເຫຼົ້າ ຖ້າຜູ້ກ່ຽວດື່ມເຫຼົ້າເມື່ອໃດ ຈະບໍ່ສາມາດຄວບຄຸມການປະພຶດຂອງຕົນເອງໄດ້ ໃນການກະທຳສິ່ງໃດໜຶ່ງ ບໍ່ວ່າຈະດື່ມໜ້ອຍ ຫຼື ຫຼາຍກໍຕາມ ຕາມຄຳຕັດສິນຂອງສານວ່າເປັນຜູ້ຈຳກັດ ຄວາມສາມດທາງດ້ານການປະພຶດ ໃນເວລາດັ່ງກ່າວ ຜູ້ກ່ຽວບໍ່ສາມາດເຮັດສັນຍາ ຫຼື ຂໍ້ຜູກພັນສິ່ງໃດ ສິ່ງໜຶ່ງໄດ້ ຖ້າເຮັດກໍຖືວ່າບໍ່ມີຜົນທາງດ້ານກົດໝາຍ; **3.** **ຂ** ອາຍຸໄດ້ **25** ປີ ເກີດອຸບປະຕິເຫດ ເຮັດໃຫ້ກາຍເປັນບ້າເສຍຈິດ ບໍ່ສາມາດຄວບຄຸມສະຕິຕົນເອງໄດ້ ໃນກະທຳສິ່ງໃດສິ່ງໜຶ່ງຂອງຕົນ ໃນທຸກໆສະຖານທີ່ ແລະ ເວລາ ຊຶ່ງສານໄດ້ຕັດສິນວ່າຜູ້ກ່ຽວເປັນຜູ້ເສຍຄວາມສາມາດທາງດ້ານການປະພຶດ ຈຶ່ງບໍ່ສາມາດເຮັດສັນຍາ ກັບບຸກຄົນທີສາມໄດ້ ຖ້າບໍ່ມີຜູ້ປົກຄອງ ຫຼື ຜູ້ຕາງໜ້າເຂົ້າຮ່ວມນຳ. (ເພື່ອໃຫ້ຈະແຈ້ງຕື່ມກະລຸນາເບິ່ງທີ່ຕົວຢ່າງມາດຕາ 69, 70 ແລະ 71) ຂອງບົດອະທິບາຍປະມວນກົດໝາຍແພ່ງ).

ເຫດຜົນໃນການສ້າງໃໝ່	ມາດຕານນີ້ສ້າງໃໝ່ເພື່ອແຍກໃຫ້ເຫັນປະເພດຜູ້ທີ່ບໍ່ມີຄວາມສາມາດທາງດ້ານການປະພຶດ. ມາດຕາ 334 ກົດໝາຍວ່າດ້ວຍ ການດຳເນີນຄະດີແພ່ງ ປີ 2012 ກຳນົດວ່າ: "ສານອາດຈະລົງຄຳຕັດສິນຮັບຮູ້ ຫຼື ບໍ່ຮັບຮູ້ ບຸກຄົນໃດໜຶ່ງ ເປັນຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດ. ໃນກໍລະນີ ສານລົງຄຳຕັດສິນຮັບຮູ້ວ່າເປັນຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດແລ້ວ ໃນຄຳຕັດສິນນັ້ນ ຍັງໄດ້ກຳນົດຜູ້ປົກຄອງຂອງຜູ້ກ່ຽວ ເຖິງຈະບໍ່ມີການຮ້ອງຂໍກໍຕາມ".
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 18 ແລະ 22 ຂອງປະມວນກົດໝາຍແພ່ງຫວຽດນາມ; ມາດຕາ 13 ວັກ1 ຂໍ້10 ຂອງປະມວນກົດໝາຍແພ່ງຍີປຸ່ນ.
ມາດຕາອ້າງອີງ	ມາດຕາ 334 ຂອງກົດໝາຍວ່າດ້ວຍ ການດຳເນີນຄະດີແພ່ງ ປີ 2012.
ຂໍ້ມູນອື່ນຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 69 ຜູ້ພົ້ນກະສຽນອາຍຸ ແລະ ຜູ້ບໍ່ພົ້ນກະສຽນອາຍຸ

ຜູ້ພົ້ນກະສຽນອາຍຸ ແມ່ນຜູ້ທີ່ມີອາຍຸແຕ່ ສິບແປດປີ ຂຶ້ນໄປ.

ຜູ້ພົ້ນກະສຽນອາຍຸ ມີຄວາມສາມາດທາງດ້ານການປະພຶດເຕັມສ່ວນ ເວັ້ນເສຍແຕ່ ຜູ້ຖືກຈຳກັດ ຫຼື ເສຍ ຄວາມສາມາດທາງດ້ານການປະພຶດ.

ຜູ້ບໍ່ພົ້ນກະສຽນອາຍຸ ແມ່ນເດັກທີ່ມີອາຍຸຕ່ຳກວ່າ ສິບແປດປີ ແລະ ມີຄວາມສາມາດທາງດ້ານການປະພຶດບໍ່ເຕັມສ່ວນ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ກ່ຽວກັບອາຍຸຂອງຜູ້ພົ້ນກະສຽນອາຍຸ ພ້ອມກັນນັ້ນກໍຊີ້ແຈງໃຫ້ເຫັນເຖິງ ຜູ້ພົ້ນກະສຽນອາຍຸຈະມີຄວາມສາມາດທັງດ້ານການປະພຶດເຕັມສ່ວນ, ສ່ວນຜູ້ບໍ່ພົ້ນກະສຽນອາຍຸ ຈະມີພຽງແຕ່ຄວາມສາມາດທາງດ້ານການປະພຶດບໍ່ເຕັມສ່ວນ.
ຕົວຢ່າງ	**1. ກ** ອາຍຸ 18 ປີ (ເປັນຜູ້ພົ້ນກະສຽນອາຍຸຖືວ່າ ເປັນຜູ້ມີຄວາມສາມາດທາງດ້ານການປະພຶດເຕັມສ່ວນສາມາດເຮັດສັນຍາກັບບຸກຄົນທີສາມດ້ວຍຕົນເອງໄດ້ ຖ້າຫາກບໍ່ມີຄຳຕັດສິນຂອງສານວ່າຜູ້ກ່ຽວເປັນ ຜູ້ຖືກຈຳກັດ ຫຼື ຜູ້ເສຍ ຄວາມສາມາດທາງດ້ານການປະພຶດ). **2. ຂ** ອາຍຸ 17 ປີ (ເປັນຜູ້ບໍ່ພົ້ນກະສຽນອາຍຸຖືວ່າ ເປັນຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດ).ໃຫ້ເບິ່ງຕົວຢ່າງ 1 ຂອງມາດຕາ 68 ຕື່ມອີກ
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງໃໝ່ເພື່ອແຍກໃຫ້ເຫັນຄວາມສາມາດທາງດ້ານການປະພຶດລະຫວ່າງ ຜູ້ມີກະສຽນອາຍຸ ສິບແປດປີຂຶ້ນໄປ ກັບ ຜູ້ບໍ່ທັນເຖິງກະສຽນອາຍຸ ສິບແປດປີ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 18 ຂອງປະມວນກົດໝາຍແພ່ງຫວຽດນາມ; ມາດຕາ 4 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 70 ຜູ້ຖືກຈຳກັດຄວາມສາມາດທາງດ້ານການປະພຶດ

ຜູ້ຖືກຈຳກັດຄວາມສາມາດທາງດ້ານການປະພຶດ ແມ່ນຜູ້ທີ່ບໍ່ສາມາດຄວບຄຸມ ຫຼື ຄາດຄະເນໄດ້ເຖິງຜົນສະທ້ອນ ຈາກການກະທຳຂອງຕົນ ທີ່ອາດເກີດອັນຕະລາຍ ຫຼື ສ້າງຄວາມເສຍຫາຍ ຕໍ່ສິດ ແລະ ຜົນປະໂຫຍດ ຂອງຕົນ ຫຼື ບຸກຄົນອື່ນ ເນື່ອງມາຈາກການຕິດສິ່ງເສບຕິດ, ວັດຖຸອອກລິດຕໍ່ຈິດປະສາດ ຫຼື ສາເຫດອື່ນ ຊຶ່ງສານເປັນຜູ້ຕັດສິນຮັບຮູ້ວ່າ ເປັນຜູ້ຖືກຈຳກັດຄວາມສາມາດທາງດ້ານການປະພຶດ.

ຈຸດປະສົງ	ເພື່ອກຳນົດນິຍາມຂອງຜູ້ຖືກຈຳກັດຄວາມສາມາດທາງດ້ານການປະພຶດ ແລະ ເຮັດໃຫ້ເຂົ້າໃຈວ່າບຸກຄົນແບບໃດຈະຕົກຢູ່ໃນ(ນິຍາມ)ນີ້
ຕົວຢ່າງ	**ກ** ເປັນຜູ້ຕິດຢາເສບຕິດ ໃນເວລາເສບຢາເສບຕິດ ເຮັດໃຫ້ຜູ້ກ່ຽວບໍ່ມີຄວາມສາມາດ ຄວບຄຸມ ແລະ ຄາດຄະເນເຖິງຜົນສະທ້ອນຂອງການກະທຳຂອງຕົນເອງ ເຊັ່ນ: ການໄປທຳຮ້າຍຮ່າງກາຍບຸກຄົນອື່ນ ການຈູດເຜົາຊັບສິ່ງຂອງ, ການເຮັດສັນຍາຕ່າງໆ ການກະທຳຂອງຜູ້ກ່ຽວຊຶ່ງອາດເກີດອັນຕະລາຍ ຫຼື ສ້າງຄວາມເສຍຫາຍຕໍ່ສິດ ແລະ ຜົນປະໂຫຍດຂອງຕົນເອງ ຫຼື ບຸກຄົນອື່ນ ເນື່ອງມາຈາກການຕິດສິ່ງເສບຕິດ. ໃນກໍລະນີດັ່ງກ່າວນີ້ ຕ້ອງມີຄຳຕັດສິນຂອງສານຮັບຮູ້ວ່າ ຜູ້ກ່ຽວຖືກຈຳກັດຄວາມສາມາດທາງດ້ານການປະພຶດ. ສະນັ້ນ, ຜູ້ທີ່ສາມາດຮ້ອງຂໍຕໍ່ສານ ໃຫ້ພິຈາລະນາຕັດສິນ ຮັບຮູ້ວ່າຜູ້ກ່ຽວມີຄວາມສາມາດທາງດ້ານການປະພຶດຈຳກັດໃຫ້ສານຮັບຮູ້ ຕາມມາດຕາ 75 ວັກ1 (ພໍ່ແມ່ ຫຼື ຜູ້ປົກຄອງ, ຜູ້ຄຸ້ມຄອງ, ຫົວໜ້າອົງການໄວຍະການປະຊາຊົນ ຫຼື ການຈັດຕັ້ງທີ່ກ່ຽວຂ້ອງ).
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງໃໝ່ເພື່ອກຳນົດໃຫ້ຮູ້ວ່າ ຜູ້ຖືກຈຳກັດຄວາມສາມາດທາງດ້ານການປະພຶດ ຕາມຄຳຕັດສິນຂອງສານ ແມ່ນຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດ ໃນລະຍະເວລາໃດໜຶ່ງ ເນື່ອງມາຈາກການຕິດສິ່ງເສບຕິດ, ວັດຖຸອອກລິດຕໍ່ຈິດປະສາດ, ເຫຼົ້າ ຫຼື ສາເຫດ ອື່ນໆ ຊຶ່ງການກະທຳຂອງຜູ້ກ່ຽວໃນເວລານັ້ນຈະເປັນໂມຄະ ບໍ່ສາມາດເກີດຂໍ້ຜູກພັນທາງແພ່ງຕໍ່ຕົນເອງ ແລະ ບຸກຄົນອື່ນ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 23 ຂອງປະມວນກົດໝາຍແພ່ງຫວຽດນາມ.
ມາດຕາອ້າງອີງ	ມາດຕາ 334 ຂອງກົດໝາຍວ່າດ້ວຍ ການດຳເນີນຄະດີແພ່ງ ປີ 2012; ມາດຕາ 75 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 71 ຜູ້ເສຍຄວາມສາມາດທາງດ້ານການປະພຶດ

ຜູ້ເສຍຄວາມສາມາດທາງດ້ານການປະພຶດ ແມ່ນຜູ້ທີ່ບໍ່ສາມາດກະທຳ ຫຼື ບໍ່ຮູ້ໄດ້ຜົນສະທ້ອນ ຈາກການກະທຳຂອງຕົນ ເນື່ອງຈາກສຸຂະພາບຈິດຂອງຜູ້ກ່ຽວ ຊຶ່ງສານເປັນຜູ້ຕັດສິນ ຮັບຮູ້ວ່າ ເປັນຜູ້ເສຍຄວາມສາມາດທາງດ້ານການປະພຶດ.

ຈຸດປະສົງ	ເພື່ອກຳນົດນິຍາມຂອງຜູ້ທີ່ເສຍຄວາມສາມາດທາງດ້ານການປະພຶດ ແລະ ເຮັດໃຫ້ເຂົ້າໃຈວ່າບຸກຄົນແບບໃດຈະຕົກຢູ່ໃນນິຍາມນີ້.

ຕົວຢ່າງ	**ຂ** ເປັນຄົນມີສຸຂະພາບດີ ຕໍ່ມາໄດ້ເກີດອຸບປະຕິເຫດ ກະທົບຫົວເຮັດໃຫ້ຜູ້ກ່ຽວມີສຸຂະພາບຈິດບໍ່ປົກກະຕິ ບໍ່ສາມາດກະທຳ ຫຼື ຄວບຄຸມການກະທຳ ແລະ ບໍ່ຮູ້ໄດ້ຜົນສະທ້ອນຈາກການກະທຳຂອງຕົນເອງ. ໃນກໍລະນີດັ່ງກ່າວນີ້ ຕ້ອງມີຄຳຕັດສິນຂອງສານຮັບຮູ້ວ່າຜູ້ກ່ຽວເປັນຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດ ການຮ້ອງຂໍຕໍ່ສານ ແມ່ນຜູ້ທີ່ໄດ້ກຳນົດໄວ້ໃນມາດຕາ 75 ວັກ 1 ຂອງປະມວນກົດໝາຍແພ່ງ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງໃໝ່ເພື່ອກຳນົດໃຫ້ຮູ້ວ່າຜູ້ທີ່ເສຍຄວາມສາມາດທາງດ້ານການປະພຶດ ແມ່ນຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດ ຕາມຄຳຕັດສິນຂອງສານ ເນື່ອງຈາກສຸຂະພາບຈິດ ເຮັດໃຫ້ຜູ້ກ່ຽວບໍ່ສາມາດກະທຳ ຫຼື ບໍ່ຮູ້ໄດ້ຜົນສະທ້ອນຈາກການກະທຳຂອງຕົນເອງ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 22 ຂອງປະມວນກົດໝາຍແພ່ງຫວຽດນາມ.
ມາດຕາອ້າງອີງ	ມາດຕາ 334 ຂອງກົດໝາຍວ່າດ້ວຍ ການດຳເນີນຄະດີແພ່ງ ປີ 2012.
ຂໍ້ມູນອື່ນຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 72 ການເຂົ້າຮ່ວມໃນສາຍພົວພັນທາງແພ່ງຂອງເດັກ

ເດັກ ທີ່ເຂົ້າຮ່ວມໃນສາຍພົວພັນທາງແພ່ງ ຕ້ອງໄດ້ຮັບຄຳເຫັນດີຈາກພໍ່ແມ່ ຫຼື ຜູ້ປົກຄອງເວັ້ນເສຍແຕ່ ການເຄື່ອນໄຫວຊີວິດປະຈຳວັນ ທີ່ແທດເໝາະກັບອາຍຸຂອງເດັກ.

ນິຕິກຳໃດ ທີ່ເດັກເຮັດຂຶ້ນໂດຍບໍ່ມີຄຳເຫັນດີຂອງພໍ່ແມ່ ຫຼື ຜູ້ປົກຄອງເປັນໂມຄະ.

ຈຸດປະສົງ	ເພື່ອປົກປ້ອງສິດຜົນປະໂຫຍດທາງກົດໝາຍຂອງຜູ້ບໍ່ພົ້ນກະສຽນອາຍຸ ເຊິ່ງຜູ້ບໍ່ພົ້ນກະສຽນອາຍຸຈະບໍ່ສາມາດເຮັດນິຕິກຳດ້ວຍໂຕຄົນດຽວໄດ້ ແລະ ນິຕິກຳທີ່ຖືກເຮັດຂຶ້ນຈະເປັນໂມຄະ ເວັ້ນເສຍແຕ່ເປັນການເຄື່ອນໄຫວຊີວິດປະຈຳວັນ.
ຕົວຢ່າງ	1. **ກ** ອາຍຸ 16 ປີ, ສາມາດເຮັດສັນຍາກັບບຸກຄົນທີສາມ (ຜູ້ທີ່ມີຄວາມສາມາດທາງດ້ານການປະພຶດ) ໄດ້ພຽງແຕ່ກ່ຽວກັບການເຄື່ອນໄຫວໃຊ້ຊີວິດປະຈຳວັນ ເຊັ່ນ: ຊື້ອາຫານກິນ, ຊື້ປື້ມ ແລະ ບົກຂຽນ ແຕ່ຖ້າຈະເຂົ້າຮ່ວມສາຍພົວພັນທາງແພ່ງທີ່ມີມູນຄ່າສູງ ຕ້ອງໄດ້ຮັບການເຫັນດີຈາກພໍ່ແມ່ ຫຼື ຜູ້ປົກຄອງ ເຊັ່ນ: ການຊື້ຂາຍລົດຈັກ, ການກູ້ຍືມເງິນ, ການເຊົ່າເຮືອນ ແລະ ທີ່ດິນ. 2. ພໍ່ແມ່ຂອງ **ກ** ໄດ້ຊື້ໂມງ ຝັງເພັດໜຶ່ງໜ່ວຍ ໃນມູນຄ່າ 20.000 ໂດລາສະຫະລັດໃຫ້ **ຂ** ຊຶ່ງມີອາຍຸພຽງແຕ່ 16 ປີ ນຳໃຊ້ ຕໍ່ມາ **ຂ** ຢູ່ຫໍພັກຂາດເຂີນເງິນ ຈຶ່ງນຳໂມງດັ່ງກ່າວໄປຂາຍ ໃຫ້ **ຄ** ການຊື້ຂາຍລະຫວ່າງ **ຂ** ແລະ **ຄ** ນັ້ນເປັນໂມຄະຖ້າຫາກພໍ່ແມ່ຂອງ **ຂ** ບໍ່ຮັບຮອງເອົາຍ້ອນ **ຂ** ຍັງເປັນເດັກ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງໃໝ່ຍ້ອນວ່າ ໃນຕົວຈິງຢູ່ໃນສັງຄົມ ເດັກແມ່ນໄດ້ເຂົ້າຮ່ວມສາຍພົວພັນທາງແພ່ງ ແຕ່ກົດໝາຍບໍ່ໄດ້ກຳນົດກ່ຽວກັບບັນຫານີ້.

ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 21 ວັກ 3 ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2015; ມາດຕາ 5 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ; ມາດຕາ 21 ຂອງປະມວນກົດໝາຍແພ່ງ ແລະ ພານິດ ໄທ.
ມາດຕາອ້າງອີງ	ມາດຕາ 215, 217, 222, 591 ແລະ 602 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 73 ການດຳເນີນທຸລະກິດຂອງເດັກ

ເດັກ ມີຄວາມສາມາດໃນການດຳເນີນທຸລະກິດ ເຊັ່ນ ການຄ້າຂາຍ, ການບໍລິການ, ການຜະລິດ ບົນພື້ນຖານການເຫັນດີ ຂອງພໍ່ແມ່ ຫຼື ຜູ້ປົກຄອງໃນການດຳເນີນທຸລະກິດນັ້ນຜູ້ກ່ຽວມີຄວາມສາມາດ ທາງດ້ານການປະພຶດຄືກັນກັບຜູ້ພົ້ນກະສຽນອາຍຸ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ວ່າ ເຖິງຈະເປັນຜູ້ບໍ່ພົ້ນກະສຽນອາຍຸກຳຕາມ ສາມາດດຳເນີນທຸລະກິດ ແລະ ຮັບຊ້ອງຕໍ່ດຳເນີນທຸລະກິດຈາກພໍ່ແມ່ໄດ້, ເພາະວ່າ ໃນກໍລະນີ ຖ້າຫາກເກີດສະພາບການໃດໜຶ່ງຂຶ້ນ, ເວລາເຮັດການຄ້າແຕ່ລະຄັ້ງຕ້ອງໄດ້ຮັບ ອະນຸຍາດຈາກພໍ່ແມ່ ຫຼື ຜູ້ປົກຄອງແລ້ວ ກໍຈະພາໃຫ້ເປັນອຸປະສັກໃນການດຳ ເນີນທຸລະກິດນັ້ນໄດ້.
ຕົວຢ່າງ	**ກ** ອາຍຸ 16 ປີ ໄດ້ຮັບອະນຸຍາດ (ລົງທຶນ) ຈາກພໍ່ແມ່ ໃຫ້ດຳເນີນທຸລະກິດ ໃນການເປີດຮ້ານສ້ອມແປງຄອມພິວເຕີ ແລະ ໂທລະສັບ ພ້ອມທັງຈຳໜ່າຍ ອຸປະກອນສື່ສານອື່ນ. ກໍລະນີດັ່ງກ່າວ ຖືວ່າ **ກ** ມີຄວາມສາມາດທາງດ້ານການ ປະພຶດໃນຂອບເຂດຂອງທຸລະກິດທີ່ໄດ້ຮັບອະນຸຍາດຈາກພໍ່ແມ່ ແລະ ສາມາດ ເຄື່ອນໄຫວດຳເນີນທຸລະກິດໄດ້ ໃນຂອບເຂດດັ່ງກ່າວຄືກັນ ກັບ ຜູ້ທີ່ພົ້ນ ກະສຽນອາຍຸ. ຖ້າ ພໍ່ແມ່ ຂອງ **ກ** ເຫັນວ່າ **ກ** ບໍ່ສາມາດດຳເນີນທຸລະກິດໃນດ້ານ ການສ້ອມແປງຄອມພິວເຕີ ແລະ ໂທລະສັບ ພໍ່ແມ່ກໍສາມາດຖອນ ຫຼື ຈຳກັດ ການອະນຸຍາດຂອງຕົນ ໃນການສ້ອມ ແປງຄອມພິວເຕີ ແລະ ໂທລະສັບ ສ່ວນ ການຈຳໜ່າຍອຸປະກອນສື່ສານນັ້ນ ກໍສາມາດໃຫ້ **ກ** ສືບຕໍ່ດຳເນີນໄດ້ ຍ້ອນວ່າ ພໍ່ແມ່ຈຳກັດພຽງແຕ່ການສ້ອມແປງ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງໃໝ່ຍ້ອນວ່າຕົວຈິງຢູ່ໃນສັງຄົມ ເດັກທີ່ບໍ່ທັນເຖິງກະສຽນອາຍຸ ສິບແປດປີ ກໍມີຫຼາຍ ທີ່ມີຄວາມສາມາດດຳເນີນທຸລະກິດ, ຄ້າຂາຍ ເຮັດນິຕິກຳ ຕ່າງໆ ແຕ່ກົດໝາຍບໍ່ໄດ້ກຳນົດບັນຫານີ້ ແລະ ເພື່ອໃຫ້ເດັກທີ່ມີພອນສະຫວັນ ໄດ້ມີໂອກາດສະແດງຄວາມສາມາດຂອງຕົນ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 27 ຂອງປະມວນກົດໝາຍແພ່ງ ແລະ ພານິດໄທ; ມາດຕາ 6 ແລະ 823 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 74 ການອອກແຮງງານຂອງເດັກ

ເດັກ ມີຄວາມສາມາດອອກແຮງງານ ຕາມການເຫັນດີ ຂອງພໍ່ແມ່ ຫຼື ຜູ້ປົກຄອງ ບົນພື້ນຖານ ກົດໝາຍວ່າດ້ວຍ ແຮງງານ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ການເຂົ້າຮ່ວມໃນສາຍພົວພັນທາງແພ່ງຂອງເດັກ ໃນການອອກ ແຮງງານຕ້ອງໄດ້ຮັບການເຫັນດີຈາກພໍ່ແມ່ ຫຼື ຜູ້ປົກຄອງເດັກ

ຕົວຢ່າງ	**ຂ** ອາຍຸ 15 ປີ ສາມາດເຮັດສັນຍາແຮງງານໄດ້ ຕາມຄຳເຫັນດີຂອງ ພໍ່ແມ່ ຫຼື ຜູ້ປົກຄອງ ແລະ ການອອກແຮງງານດັ່ງກ່າວ ຕ້ອງໃຫ້ສອດຄ່ອງກົດໝາຍວ່າດ້ວຍແຮງງານຄື: ບໍ່ໃຫ້ເດັກອອກແຮງງານໜັກ, ໃນທີ່ເປີະເປື້ອນ ຫຼື ບ່ອນທີ່ສູງຊຶ່ງຈະມີຜົນສະທ້ອນຕໍ່ສຸຂະພາບຂອງເດັກ ຕາມມາດຕາ 3 ຂໍ້ 11, 101 ແລະ 102 ຂອງກົດໝາຍວ່າດ້ວຍແຮງງານ ປີ 2013.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງໃໝ່ຍ້ອນວ່າກົດໝາຍວ່າດ້ວຍ ແຮງງານຂອງລາວ ໄດ້ກຳນົດໃຫ້ບັນດາຫົວໜ່ວຍແຮງງານສາມາດຮັບເອົາເດັກມາເປັນຜູ້ອອກແຮງງານໄດ້ ແຕ່ກົດໝາຍແພ່ງ ຂອງລາວ ບໍ່ໄດ້ກໍ່ນົດບັນຫານີ້.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 27 ຂອງປະມວນກົດໝາຍແພ່ງ ແລະ ພານິດໄທ.
ມາດຕາອ້າງອີງ	ມາດຕາ 3 ຂໍ້ 11, 101 ແລະ 102 ຂອງກົດໝາຍແຮງງານ ປີ 2013.
ຂໍ້ມູນອື່ນຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 75 ການຮ້ອງຂໍໃຫ້ຮັບຮູ້ວ່າເປັນຜູ້ຖືກຈຳກັດ ຫຼື ຜູ້ເສຍຄວາມສາມາດທາງດ້ານການປະພຶດ

ພໍ່ແມ່, ຜູ້ປົກຄອງ, ຜູ້ຕາງໜ້າໂຮງຮຽນ, ຫົວໜ້າອົງການໄອຍະການປະຊາຊົນ ຫຼື ການຈັດຕັ້ງທີ່ກ່ຽວຂ້ອງ ມີສິດຮ້ອງຂໍຕໍ່ສານໃຫ້ພິຈາລະນາຕັດສິນຮັບຮູ້ວ່າ ບຸກຄົນທີ່ຢູ່ໃນການຄຸ້ມຄອງຂອງຕົນ ເປັນຜູ້ຖືກຈຳກັດ ຫຼື ຜູ້ເສຍຄວາມສາມາດທາງດ້ານການປະພຶດ.

ໃນກໍລະນີ ທີ່ສານຫາກຮັບຮູ້ວ່າ ບຸກຄົນໃດໜຶ່ງເປັນຜູ້ຖືກຈຳກັດ ຫຼື ຜູ້ເສຍຄວາມສາມາດທາງດ້ານການປະພຶດແລ້ວ ຕ້ອງກຳນົດຜູ້ປົກຄອງຂອງຜູ້ກ່ຽວເຖິງວ່າຈະບໍ່ມີການຮ້ອງຂໍກໍຕາມ.

ຈຸດປະສົງ	ເພື່ອກຳນົດຂອບເຂດຂອງຜູ້ທີ່ມີສິດຮ້ອງຂໍຕໍ່ສານພິຈາລະນາຕັດສິນ ວ່າບຸກຄົນໃດໜຶ່ງເປັນຜູ້ຖືກຈຳກັດ ຫຼື ຜູ້ເສຍຄວາມສາມາດທາງດ້ານການປະພຶດ, ເມື່ອຖືກຮັບຮູ້ວ່າເປັນຜູ້ຖືກຈຳກັດ ຫຼື ຜູ້ເສຍຄວາມສາມາດທາງດ້ານການປະພຶດແລ້ວ ກໍຕ້ອງແຕ່ງຕັ້ງຜູ້ປົກຄອງ.
ຕົວຢ່າງ	**ກ** ເປັນຄົນທີ່ຕິດເຫຼົ້າ ເວລາທີ່ຜູ້ກ່ຽວດື່ມເຫຼົ້າບໍ່ສາມາດຮູ້ໄດ້ວ່າຕົນເອງໄດ້ເຮັດຫຍັງລົງໄປ ເພື່ອປ້ອງກັນບໍ່ໃຫ້ເກີດຄວາມເສຍຫາຍຍ້ອນການກະທຳຂອງຜູ້ກ່ຽວ ພໍ່ແມ່, ຜູ້ປົກຄອງ, ຜູ້ຕາງໜ້າໂຮງຮຽນ, ຫົວໜ້າອົງການໄອຍະການປະຊາຊົນ ຫຼື ການຈັດຕັ້ງທີ່ກ່ຽວຂ້ອງ ມີສິດຮ້ອງຂໍຕໍ່ສານໃຫ້ພິຈາລະນາຕັດສິນຮັບຮູ້ວ່າ ບຸກຄົນທີ່ຢູ່ໃນການຄຸ້ມຄອງຂອງຕົນ ເປັນຜູ້ຖືກຈຳກັດ. ຜູ້ຮ້ອງຂໍໃຫ້ສານຕັດສິນຮັບຮູ້ສຳລັບຜູ້ເສຍຄວາມສາມາດທາງດ້ານການປະພຶດ **ກ** ແມ່ນບັນດາບຸກຄົນ ຫຼື ການຈັດຕັ້ງ ຄືຕົວຢ່າງ ເທິງນັ້ນ. ໃນເວລາສານພິຈາລະນາ **ກ** ວ່າເປັນຜູ້ເສຍຄວາມສາມາດທາງດ້ານການປະພຶດ ສານຕ້ອງໄດ້ປະສານກັບຜູ້ຮ້ອງຂໍ ກ່ຽວກັບການແຕ່ງຕັ້ງຜູ້ທີ່ເໝາະສົມ ທີ່ຈະເປັນຜູ້ປົກຄອງໄດ້ຈະແມ່ນພໍ່, ແມ່, ອ້າຍ, ນ້ອງ, ຍາດໄກ້ຊິດ, ບ້ານ, ຜູ້ຖືກຈຳກັດຄວາມສາມາດທາງດ້ານການຮຽນ ແລ້ວສານຕ້ອງໄດ້ກຳນົດເປັນຜູ້ປົກຄອງ **ກ** ປະພຶດໄວ້ໃນຄຳຕັດສິນນັ້ນ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງເພື່ອໃຫ້ຮູ້ເຖິງບຸກຄົນທີ່ສາມາດຮ້ອງຂໍຕໍ່ສານ ໃນການຮັບຮູ້ວ່າບຸກຄົນໃດໜຶ່ງ ເປັນຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດ ຫຼື ຜູ້ເສຍຄວາມສາມາດທາງດ້ານການປະພຶດ.

ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 7,11 ແລະ 15 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ; ມາດຕາ 24 ວັກ1 ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2015.
ມາດຕາອ້າງອີງ	ມາດຕາ 331 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ປີ 2012.
ຂໍ້ມູນອື່ນຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 76 ຜົນຂອງການຮັບຮູ້ເປັນຜູ້ຖືກຈຳກັດຄວາມສາມາດທາງດ້ານການປະພຶດ

ເມື່ອມີຄຳຕັດສິນຮັບຮູ້ວ່າບຸກຄົນໃດໜຶ່ງ ເປັນຜູ້ຖືກຈຳກັດຄວາມສາມາດທາງດ້ານການປະພຶດແລ້ວ ນິຕິກຳທີ່ເຮັດຂຶ້ນໂດຍບໍ່ໄດ້ຮັບການເຫັນດີຈາກຜູ້ປົກຄອງຫຼືບໍ່ໄດ້ຜ່ານການຕາງໜ້າຂອງຜູ້ປົກຄອງ ເປັນໂມຄະເວັ້ນເສຍແຕ່ ນິຕິກຳທີ່ກ່ຽວຂ້ອງກັບການເຄື່ອນໄຫວຊີວິດປະຈຳວັນ.

ເມື່ອຜູ້ຖືກຈຳກັດຄວາມສາມາດທາງດ້ານການປະພຶດ ຫາກກັບຄືນສູ່ສະພາບປົກກະຕິແລ້ວ ຜູ້ກ່ຽວ ຫຼື ຜູ້ມີສິດ ແລະ ຜົນປະໂຫຍດກ່ຽວຂ້ອງ ກໍມີສິດຮ້ອງຂໍໃຫ້ສານລົບລ້າງຄຳຕັດສິນທີ່ຮັບຮູ້ວ່າຜູ້ກ່ຽວ ເປັນຜູ້ຖືກຈຳກັດຄວາມສາມາດທາງດ້ານການປະພຶດ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ວ່າ ເມື່ອມີການຮັບຮູ້ວ່າເປັນຜູ້ຖືກຈຳກັດຄວາມສາມາດທາງດ້ານການປະພຶດແລ້ວ ນິຕິກຳທີ່ເຮັດຂຶ້ນໂດຍຜູ້ກ່ຽວທີ່ນອກເໜືອຈາກການເຄື່ອນໄຫວຊີວິດປະຈຳວັນ ຈະເປັນໂມຄະ ເພື່ອປົກປ້ອງຄວາມອັບປະ�โຫຍດທີ່ບໍ່ໄດ້ຄາດຄະເນມາກ່ອນຂອງຜູ້ມີຄວາມສາມາດທາງດ້ານການປະພຶດ, ນອກຈາກນີ້ ໃນກໍລະນີທີ່ສາມາດຟື້ນຟູກັບມາສູ່ສະພາບປົກກະຕິໄດ້ແລ້ວ ກໍສາມາດຮ້ອງຂໍລົບລ້າງ ແລະ ສາມາດກັບມາໃຊ້ຊີວິດປະຈຳວັນໃນສັງຄົມດ້ວຍຕົນເອງໄດ້.
ຕົວຢ່າງ	1. **ກ** ເປັນຜູ້ທີ່ຖືກຈຳກັດຄວາມສາມາດທາງດ້ານການປະພຶດ ໄດ້ເຮັດສັນຍາຂາຍທີ່ດິນ ແລະ ເຮືອນໃຫ້ແກ່ **ຂ.** ຕໍ່ມາ **ຄ** ຊຶ່ງເປັນຜູ້ປົກຄອງຂອງ **ກ** ຮູ້ ຈຶ່ງໄດ້ໄປແຈ້ງຍົກເລີກສັນຍານຳ **ຂ** ໂດຍອ້າງເຫດຜົນວ່າ **ກ** ເປັນຜູ້ທີ່ບໍ່ມີຄວາມສາມາດທາງດ້ານການປະພຶດ ແຕ່ **ຂ** ບໍ່ຍອມຍົກເລີກສັນຍາ, ເມື່ອເປັນເຊັ່ນນັ້ນ **ຄ** ໄດ້ຮ້ອງຟ້ອງຕໍ່ສານ ເພື່ອໃຫ້ສານພິຈາລະນາວ່ານິຕິກຳ ຫຼື ສັນຍາທີ່ເຮັດຂຶ້ນ ລະຫວ່າງ **ກ** ກັບ **ຂ** ນັ້ນເປັນໂມຄະຖ້າຫາກບໍ່ມີການເຫັນດີຈາກຜູ້ປົກຄອງ. ເຖິງວ່າສານຈະລົງຄຳຕັດສິນວ່າ **ກ** ເປັນຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດກໍຕາມ, ແຕ່ **ກ** ສາມາດໄປຊື້ຂອງກິນຕາມຮ້ານ ຫຼື ເຂົ້າໜົມຫວານ ໂດຍບໍ່ຕ້ອງມີການເຫັນດີຈາກຜູ້ປົກຄອງກໍໄດ້. 2. **ກ** ເປັນຄົນຕິດເຫຼົ້າຢ່າງໜັກ ເວລາກິນແລ້ວ **ກ** ບໍ່ສາມາດຮູ້ໄດ້ວ່າຕົນໄດ້ເຮັດຫຍັງແດ່ ພໍ່ຂອງ **ກ** ຈຶ່ງໄດ້ຮ້ອງຂໍຕໍ່ສານ ສານຈຶ່ງໄດ້ຕັດສິນວ່າ **ກ** ເປັນຜູ້ຖືກສານຕັດສິນຮັບຮູ້ວ່າ ເປັນຜູ້ຖືກຈຳກັດຄວາມສາມາດທາງດ້ານການປະພຶດ ຕໍ່ມາຜູ້ກ່ຽວໄດ້ເລີກເຫຼົ້າກັບມາເປັນຄົນປົກກະຕິ ໃນເມື່ອຜູ້ກ່ຽວເປັນຄົນປົກກະຕິແລ້ວ **ກ** ສາມາດໄປຮ້ອງຂໍຕໍ່ສານໃຫ້ສານພິຈາລະນາລົບລ້າງຄຳຕັດສິນສະບັບທີ່ໄດ້ຕັດສິນວ່າ **ກ** ເປັນຜູ້ຖືກຈຳກັດຄວາມສາມາດທາງດ້ານການປະພຶດນັ້ນໄດ້.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງໃໝ່ຍ້ອນວ່າກົດໝາຍ ທີ່ມີຢູ່ປັດຈຸບັນ ບໍ່ໄດ້ກຳນົດ ກ່ຽວກັບການຄືນສູ່ສະພາບປົກກະຕິຂອງຜູ້ຖືກຈຳກັດຄວາມສາມາດທາງດ້ານການປະພຶດ ວ່າ ມີສິດຮ້ອງຂໍຕໍ່ສານ. ສະນັ້ນ, ຈຶ່ງປັບປຸງ ວ່າ ຖ້າຜູ້ຖືກຈຳກັດຄວາມສາມາດ

	ທາງດ້ານການປະພຶດກັບຄືນສູ່ປົກກະຕິແລ້ວ ຜູ້ກ່ຽວ ຫຼື ຜູ້ມີສິດ ແລະ ຜົນປະໂຫຍດກ່ຽວຂ້ອງ ກໍມີສິດຮ້ອງຂໍໃຫ້ສານລົບລ້າງຄຳຕັດສິນທີ່ຮັບຮູ້ວ່າຜູ້ກ່ຽວເປັນຜູ້ຖືກຈຳກັດຄວາມສາມາດທາງດ້ານການປະພຶດ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 9, 13 ວັກ4 ແລະ 20 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ; ມາດຕາ 24ວັກ 2 ແລະ ວັກ 3 ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2015.
ມາດຕາອ້າງອີງ	ມາດຕາ 335 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ປີ 2012.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 77 ຜົນຂອງການຮັບຮູ້ວ່າເປັນຜູ້ເສຍຄວາມສາມາດທາງດ້ານການປະພຶດ

ເມື່ອມີຄຳຕັດສິນຮັບຮູ້ວ່າບຸກຄົນໃດໜຶ່ງ ເປັນຜູ້ເສຍຄວາມສາມາດທາງດ້ານການປະພຶດແລ້ວ ບຸກຄົນນັ້ນ ກໍຈະບໍ່ສາມາດເຮັດນິຕິກຳດ້ວຍຕົນເອງ, ຜູ້ປົກຄອງເປັນຜູ້ຕາງໜ້າຕາມກົດໝາຍ ໃນການເຮັດນິຕິກຳ ເພື່ອຜົນປະໂຫຍດຂອງຜູ້ກ່ຽວ.

ເມື່ອຜູ້ເສຍຄວາມສາມາດທາງດ້ານການປະພຶດ ຫາກໄດ້ກັບຄືນສູ່ສະພາບປົກກະຕິແລ້ວ ຜູ້ກ່ຽວ ຫຼື ຜູ້ມີ ສິດ ແລະ ຜົນປະໂຫຍດທີ່ກ່ຽວຂ້ອງ ກໍມີສິດຮ້ອງຂໍໃຫ້ສານລົບລ້າງຄຳຕັດສິນທີ່ຮັບຮູ້ວ່າ ຜູ້ກ່ຽວເປັນຜູ້ເສຍຄວາມສາມາດທາງດ້ານການປະພຶດ.

ຈຸດປະສົງ	ເພື່ອກຳນົດກ່ຽວກັບກໍລະນີຫາກມີຜົນຂອງການຕັດສິນຮັບຮູ້ວ່າເປັນຜູ້ເສຍຄວາມສາມາດທາງດ້ານການປະພຶດແລ້ວ ແມ່ນໃຜຈະເປັນຜູ້ເຮັດນິຕິກຳເພື່ອຜູ້ທີ່ຖືກຮັບຮູ້ວ່າເປັນຜູ້ເສຍຄວາມສາມາດທາງດ້ານການປະພຶດ ແລະ ຖ້າ ຜູ້ທີ່ຖືກຮັບຮູ້ວ່າເປັນຜູ້ເສຍຄວາມສາມາດທາງດ້ານການປະພຶດ ຫາກກັບຄືນສູ່ສະພາບປົກກະຕິແລ້ວ ຈະສາມາດດຳເນີນການໄປຄືແນວໃດ.
ຕົວຢ່າງ	1. **ຂ** ເປັນຄົນປົກກະຕິ ຕໍ່ມາໄດ້ເກີດປ່ວຍທາງຈິດ ຊຶ່ງບໍ່ສາມາດຮັບຮູ້ການກະທຳຂອງຕົນໄດ້ **ກ** ຜູ້ເປັນພໍ່ຈຶ່ງໄດ້ຮ້ອງຂໍຕໍ່ສານເພື່ອໃຫ້ສານຕັດສິນ ສານຈຶ່ງໄດ້ລົງຄຳຕັດສິນຮັບຮູ້ວ່າ **ຂ** ເປັນຜູ້ທີ່ເສຍຄວາມສາມາດທາງດ້ານການປະພຶດ ພ້ອມນັ້ນ ສານຍັງໄດ້ກຳນົດໃຫ້ **ຄ** ຜູ້ເປັນອ້າຍຂອງ **ຂ** ເປັນຜູ້ປົກຄອງ ສະນັ້ນ **ຂ** ບໍ່ສາມາດເຮັດຕິກຳໃດໆດ້ວຍຕົນເອງໄດ້ມີແຕ່ **ຄ** (ຜູ້ປົກຄອງ) ຈະປັນຜູ້ຕາງໜ້າຂອງຜູ້ກ່ຽວ ສາມາດເຮັດນິຕິກຳ ເພື່ອຜົນປະໂຫຍດຂອງ **ຂ** ໄດ້ ເຊັ່ນ ຂາຍຊັບຂອງ **ຂ** ເພື່ອເປັນຄ່າລ້ຽງດູ ຫຼື ເປັນຄ່າປິ່ນປົວ. ຕໍ່ມາ **ຄ** ໄດ້ນຳເອົາ **ຂ** ໄປປິ່ນປົວໃນເມື່ອແພດໄດ້ຢັ້ງຢືນວ່າ **ຂ** ໄດ້ຫາຍດີເປັນປົກກະຕິແລ້ວ **ຂ** ເອງສາມາດຮ້ອງຂໍຕໍ່ສານເພື່ອໃຫ້ລົບລ້າງຄຳຕັດສິນວ່າຜູ້ກ່ຽວເປັນຜູ້ເສຍຄວາມສາມາດທາງດ້ານການປະພຶດນັ້ນ. 2. ໃນເວລາທີ່ **ຂ** ຖືກສານຕັດສິນຮັບຮູ້ວ່າເປັນຜູ້ເສຍຄວາມສາມາດທາງດ້ານການປະພຶດອ້າຍເອື້ອຍນ້ອງ ໄດ້ພ້ອມກັນແບ່ງປັນມູນມໍຣະດົກຊຶ່ງພູດຂອງ **ຂ** ແມ່ນ **ຄ** (ຜູ້ປົກຄອງ) ເປັນຜູ້ຄຸ້ມຄອງໄວ້ ຕໍ່ມາ **ຂ** ໄດ້ຮັບການປິ່ນປົວຈົນຫາຍດີເປັນປົກກະຕິ **ຂ** ສາມາດໄປຮ້ອງຂໍຕໍ່ສານໃຫ້ຕັດສິນລົບລ້າງຄຳຕັດສິນສະບັບທີ່ໄດ້ຕັດສິນວ່າຕົນເອງເປັນຜູ້ເສຍ

	ຄວາມສາມາດທາງດ້ານການປະພຶດນັ້ນ ເພື່ອຈະໄດ້ເຂົ້າຄຸ້ມຄອງພູດມູນມໍຣະດົກຂອງຕົນດ້ວຍຕົນເອງ. 3. **ຂ** ໄດ້ໃຫ້ **ກ** ກູ້ຢືມເງິນຈຳນວນ 20.000.000 ກີບ ຕໍ່ມາຖືກສານຕັດສິນຮັບຮູ້ວ່າ **ກ** ເປັນຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດຍ້ອນຕິດເຫຼົ້າ **ຂ** (ເຈົ້າໜີ້) ບໍ່ສາມາດໄປທວງໃຫ້ **ກ** ໃຊ້ໜີ້ໄດ້ໃນເວລາຕໍ່ມາ **ກ** ໄດ້ເລີກກິນເຫຼົ້າແລ້ວກັບຄືນເປັນປົກກະຕິ **ຂ** (ເຈົ້າໜີ້)ສາມາດໄປຮ້ອງຂໍຕໍ່ສານໃຫ້ຕັດສິນລົບລ້າງຄຳຕັດສິນສະບັບທີ່ໄດ້ຕັດສິນວ່າ **ກ** ເປັນຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດນັ້ນ ເພື່ອໃຫ້ **ກ** ໃຊ້ແທນໜີ້ສິນທີ່ຕົນມີ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງໃໝ່ຍ້ອນວ່າກົດໝາຍໃນປັດຈຸບັນ ບໍ່ໄດ້ກຳນົດ ກ່ຽວກັບການຄືນສູ່ສະພາບປົກກະຕິ ຂອງຜູ້ເສຍຄວາມສາມາດທາງດ້ານການປະພຶດ ວ່າ ມີສິດຮ້ອງຂໍຕໍ່ສານ. ສະນັ້ນ, ຈຶ່ງປັບປຸງວ່າຖ້າຜູ້ເສຍຄວາມສາມາດທາງດ້ານການປະພຶດ ກັບຄືນສູ່ປົກກະຕິແລ້ວ ຜູ້ກ່ຽວ ຫຼື ຜູ້ມີສິດ ແລະ ຜົນປະ�โຫຍດກ່ຽວຂ້ອງ ກໍມີສິດຮ້ອງຂໍໃຫ້ສານລົບລ້າງຄຳຕັດສິນທີ່ຮັບຮູ້ວ່າ ຜູ້ກ່ຽວເປັນຜູ້ເສຍຄວາມສາມາດທາງດ້ານການປະພຶດ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 22 ຂອງປະມວນກົດໝາຍແພ່ງຫວຽດນາມປີ 2015.
ມາດຕາອ້າງອີງ	ມາດຕາ 335 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ປີ 2012.
ຂໍ້ມູນອື່ນຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ງ. ການຄຸ້ມຄອງ ຜູ້ຖືກຈຳກັດ ຫຼື ຜູ້ເສຍຄວາມສາມາດທາງດ້ານປະພຶດ

ມາດຕາ 78 ການຄຸ້ມຄອງຜູ້ຖືກຈຳກັດ ຫຼື ຜູ້ເສຍຄວາມສາມາດທາງດ້ານການປະພຶດ

ຜູ້ຖືກຈຳກັດ ຫຼື ຜູ້ເສຍຄວາມສາມາດທາງດ້ານການປະພຶດ ຕາມຄຳຕັດສິນຂອງສານ ຕ້ອງໄດ້ຮັບການ ຄຸ້ມຄອງໂດຍ ຜູ້ຄຸ້ມຄອງ ເພື່ອປົກປ້ອງສິດ ແລະ ຜົນປະ�โຫຍດຂອງຜູ້ກ່ຽວ ຕາມທີ່ໄດ້ກຳນົດໄວ້ໃນປະມວນກົດໝາຍສະບັບນີ້ ແລະ ກົດໝາຍອື່ນ.

ຈຸດປະສົງ	ເພື່ອກຳນົດໃຫ້ມີຜູ້ຄຸ້ມຄອງໃນການປົກປ້ອງສິດຜົນປະ�โຫຍດຕາມກົດໝາຍ ຂອງຜູ້ຖືກຈຳກັດ ຫຼື ຜູ້ເສຍຄວາມສາມາດທາງດ້ານການປະພຶດ ເພາະວ່າຖ້າຜູ້ກ່ຽວຫາກຖືກຕັດສິນໃຫ້ ຈຳກັດ ຫຼື ເສຍຄວາມສາມາດທາງດ້ານການປະພຶດ ແລ້ວ ກໍຈະບໍ່ສາມາດເຮັດນິຕິກຳຢ່າງເຕັມສ່ວນໄດ້.
ຕົວຢ່າງ	**ກ** ອາຍຸ 30 ປີ ເປັນເຈົ້າຂອງອາພາດເມັ້ນ ຈຳນວນ 5 ຫ້ອງ ທີ່ມີຄົນເຊົ່າທຸກຫ້ອງແຕ່ຕ້ອງໄດ້ຕໍ່ສັນຍາທຸກປີ. ໃນເວລາຕໍ່ມາ ຜູ້ກ່ຽວໄດ້ເປັນຄົນຕິດເຫຼົ້າ ຫຼື ເປັນຄົນບ້າເສຍຈິດ (ຜູ້ຖືກຈຳກັດ ຫຼື ເສຍສາມາດທາງດ້ານການປະພຶດ ຕາມຄຳຕັດສິນຂອງສານ ຊຶ່ງສານໄດ້ແຕ່ງຕັ້ງ **ຄ** ເປັນຜູ້ປົກຄອງ). ຖ້າຜູ້ເຊົ່າຫ້ອງໃດໜຶ່ງຕ້ອງການຕໍ່ສັນຍາເຊົ່າແມ່ນບໍ່ສາມາດເຮັດສັນຍາຕໍ່ກັບ **ກ** ໂດຍກົງໄດ້. ກໍລະນີດັ່ງກ່າວຕ້ອງໄດ້ຕໍ່ສັນຍາກັບ **ຄ** ທີ່ເປັນຜູ້ປົກຄອງ **ກ** ຕາມຄຳຕັດສິນຂອງສານ.

ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງໃໝ່ຍ້ອນວ່າ ຜ່ານມາກົດໝາຍບໍ່ທັນໄດ້ກຳນົດ ກ່ຽວກັບການປົກຄອງ ຜູ້ຖືກຈຳກັດ ຫຼື ເສຍຄວາມສາມາດທາງດ້ານການປະພຶດ. ສະນັ້ນ, ຈຶ່ງໄດ້ຂຽນມາດຕານີ້ຂຶ້ນມາ ໂດຍກຳນົດກ່ຽວກັບ ການປົກຄອງດັ່ງກ່າວແມ່ນ ປົກປ້ອງສິດ ແລະ ຜົນປະໂຫຍດ ຂອງຜູ້ຖືກຈຳກັດ ຫຼື ຜູ້ເສຍຄວາມສາມາດທາງດ້ານການປະພຶດ ຕາມທີ່ໄດ້ກຳນົດໄວ້ໃນປະມວນກົດໝາຍແພ່ງ ແລະ ກົດໝາຍອື່ນ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 46 ວັກ1 ແລະ 58 ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2015.
ມາດຕາອ້າງອີງ	ມາດຕາ 334 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ປີ 2012.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 79 ເງື່ອນໄຂຂອງການເປັນຜູ້ຄຸ້ມຄອງຕາມຄຳຕັດສິນຂອງສານ

ຜູ້ຄຸ້ມຄອງຕາມຄຳຕັດສິນຂອງສານ ແມ່ນຜູ້ທີ່ຖືກແຕ່ງຕັ້ງ ຕາມຄຳຕັດສິນຂອງສານ ໃຫ້ເປັນຜູ້ເບິ່ງ ແຍງດູແລ ແລະ ປົກປ້ອງສິດ ຜົນປະໂຫຍດຂອງຜູ້ຖືກຈຳກັດ ຫຼື ເສຍຄວາມສາມາດທາງດ້ານການປະພຶດ.

ຜູ້ທີ່ຈະຖືກສານແຕ່ງຕັ້ງເປັນຜູ້ຄຸ້ມຄອງ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ມີຄວາມສາມາດທາງດ້ານການປະພຶດ;
2. ບໍ່ໄດ້ຖືກສານຕັດສິນລົງໂທດຕັດອິດສະລະພາບມາກ່ອນ ຍ້ອນການກະທຳຜິດໂດຍເຈດຕະນາ;
3. ບໍ່ໄດ້ຖືກສານຕັດສິນໃຫ້ລົ້ມລະລາຍມາກ່ອນ;
4. ບໍ່ໄດ້ຖືກຫ້າມເປັນຜູ້ຄຸ້ມຄອງມາກ່ອນ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ວ່າ ການເລືອກເຟັ້ນເອົາຜູ້ທີ່ຈະເປັນຜູ້ປົກຄອງ ຂອງຜູ້ຖືກຈຳກັດ ຫຼື ເສຍຄວາມສາມາດທາງດ້ານການປະພຶດ ຕ້ອງໃຫ້ຖືກຕ້ອງຕາມເງື່ອນໄຂທີ່ໄດ້ກຳນົດໄວ້.
ຕົວຢ່າງ	**ກ** ໄດ້ເປັນຜູ້ຕິດເຫຼົ້າ ຫຼື ຢາເສບຕິດ ຫຼື ມີບັນຫາເລື່ອງສຸຂະພາບທາງຈິດ **ຂ** ຜູ້ເປັນລຸງຂອງ **ກ** ໄດ້ຮ້ອງຂໍຕໍ່ສານ ເພື່ອໃຫ້ສານພິຈາລະນາວ່າ **ກ** ເປັນຜູ້ຖືກຈຳກັດ ຫຼື ຜູ້ເສຍຄວາມສາມາດທາງດ້ານການປະພຶດ ແລະ **ຂ** ໄດ້ສະເໜີເປັນຜູ້ປົກຄອງ **ກ** ໃນກໍລະນີດັ່ງກ່າວນີ້ ຖ້າມີຫຼັກຖານຢັ້ງຢືນໜັກແໜ້ນ ວ່າ **ກ** ເປັນຜູ້ຖືຈຳກັດ ຫຼື ຜູ້ເສຍຄວາມສາມາດທາງດ້ານການປະພຶດການພິຈາລະນາຂອງສານທີ່ຈະພິຈາລະນາ ໃຫ້ **ຂ** ເປັນຜູ້ປົກຄອງ **ກ** ໄດ້ກໍຕໍ່ເມື່ອ **ຂ** ມີເງື່ອນໄຂຄົບຖ້ວນເຊັ່ນ: ເປັນຜູ້ມີຄວາມສາມາດທາງດ້ານການປະພຶດຄື ບໍ່ເປັນບ້າ ເສຍຈິດ, ບໍ່ໄດ້ຖືກສານຕັດສິນລົງໂທດຕັດອິດສະລະພາບມາກ່ອນ ຍ້ອນການກະທຳຜິດໂດຍເຈດຕະນາ, ບໍ່ໄດ້ຖືກສານຕັດສິນໃຫ້ລົ້ມລະລາຍມາກ່ອນ ແລະ ບໍ່ໄດ້ຖືກຫ້າມເປັນຜູ້ປົກຄອງມາກ່ອນ ແຕ່ຖ້າ **ຂ** ບໍ່ຄົບເງື່ອນໄຂຕາມທີ່ກຳນົດໄວ້ໃນ ມາດຕາ 79 ຂອງປະມວນກົດໝາຍແພ່ງ ສານກໍຈະຄົ້ນຄວ້າຊອກເອົາຜູ້ໃໝ່ທີ່ເໝາະສົມ ແລະ ຖືກຕ້ອງຕາມເງື່ອນໄຂດັ່ງກ່າວ.

	ຖ້າ **ຂ** ເຄີຍເປັນຜູ້ຄຸ້ມຄອງຜູ້ໃດໜຶ່ງມາກ່ອນແລ້ວໄດ້ເຮັດໃນສິ່ງບໍ່ດີຕໍ່ຜູ້ຖືກຄຸ້ມຄອງເຊັ່ນ: ໄດ້ນຳຊັບສົມບັດຂອງຜູ້ຖືກຄຸ້ມຄອງນັ້ນໄປໃຊ້ແບບຟຸ່ມເຟືອຍ, ນຳໃຊ້ແບບບໍ່ເປັນ ຜົນປະ�โยດ ແກ່ຜູ້ຖືກຄຸ້ມຄອງ ຫຼື ຕັດຮອນເອົາຊັບຂອງຜູ້ຖືກຄຸ້ມຄອງມາເປັນຂອງຕົນ ໂດຍມີການຕັດສິນຂອງສານໃຫ້ພົ້ນຈາກການເປັນຜູ້ຄຸ້ມຄອງແລ້ວ ຈະບໍ່ສາມາດມາເປັນຜູ້ຄຸ້ມຄອງ **ກ** ໄດ້ອີກ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງໃໝ່ເພື່ອ ກຳນົດເງື່ອນໄຂຂອງຜູ້ທີ່ສາມາດເປັນຜູ້ປົກຄອງ ເພື່ອປົກປ້ອງຊັບສິ່ງຂອງ, ສິດ ແລະ ຜົນປະ�โยດ ຂອງຜູ້ຖືກຈຳກັດ ຫຼື ຜູ້ເສຍຄວາມສາມາດທາງດ້ານການປະພຶດ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 49 ຂອງປະມວນກົດມາຍແພ່ງຫວຽດນາມ ປີ 2015; ມາດຕາ 847 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 334 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ປີ 2012.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 80 ສິດ ແລະ ພັນທະຂອງຜູ້ຄຸ້ມຄອງ

ຜູ້ຄຸ້ມຄອງຂອງຜູ້ຖືກຈຳກັດ ຫຼື ຜູ້ເສຍຄວາມສາມາດທາງດ້ານການປະພຶດ ມີສິດຕົ້ນຕໍ ດັ່ງນີ້:

1. ນຳໃຊ້ຊັບສົມບັດຂອງຜູ້ຖືກຈຳກັດຫຼືເສຍຄວາມສາມາດທາງດ້ານການປະພຶດເພື່ອເບິ່ງແຍງດູແລຜູ້ກ່ຽວ;
2. ໃຊ້ຈ່າຍສິ່ງທີ່ຈຳເປັນສຳລັບການຄຸ້ມຄອງປົກປັກຮັກສາຊັບສົມບັດ;
3. ໃຫ້ຄຳເຫັນ ຕໍ່ການເຮັດນິຕິກຳທີ່ສຳຄັນ ຫຼື ມີມູນຄ່າສູງຂອງຜູ້ຖືກຈຳກັດຄວາມສາມາດທາງດ້ານການປະພຶດ;
4. ຕາງໜ້າເຮັດນິຕິກຳເພື່ອປົກປ້ອງສິດຜົນປະ�โยດຂອງຜູ້ຖືກຈຳກັດຫຼືເສຍຄວາມສາມາດທາງດ້ານການປະພຶດ.

ຜູ້ຄຸ້ມຄອງຜູ້ຖືກຈຳກັດ ຫຼື ຜູ້ເສຍຄວາມສາມາດທາງດ້ານການປະພຶດ ມີພັນທະຕົ້ນຕໍ ດັ່ງນີ້:

1. ເບິ່ງແຍງດູແລແລະຮັບປະກັນການປິ່ນປົວຕໍ່ຜູ້ຖືກຈຳກັດຫຼືຜູ້ເສຍຄວາມສາມາດທາງດ້ານການປະພຶດ;
2. ເປັນຜູ້ຕາງໜ້າໃນການປະຕິບັດນິຕິກຳ;
3. ຄຸ້ມຄອງແລະປົກປັກຮັກສາຊັບສົມບັດຂອງຜູ້ກ່ຽວ;
4. ປົກປ້ອງສິດແລະຜົນປະ�โยດອັນຊອບທຳຂອງຜູ້ກ່ຽວ;
5. ຮັບຜິດຊອບຕໍ່ຄວາມເສຍຫາຍທີ່ເກີດມາຈາກການກະທຳຂອງຜູ້ຖືກຈຳກັດ ຫຼື ຜູ້ເສຍຄວາມສາມາດທາງດ້ານການປະພຶດ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 487 ຂອງ ປະມວນກົດໝາຍສະບັບນີ້.ບໍ່ຄວນເອົາເປັນຂໍ້ 5 ຄວນເປັນວັກຕ່າງຫາກ

ຈຸດປະສົງ	ເພື່ອກຳນົດກ່ຽວກັບ ສິດ ແລະ ພັນທະ ຂອງຜູ້ປົກຄອງຂອງຜູ້ຖືກຈຳກັດ ຫຼື ຜູ້ເສຍຄວາມສາມາດທາງດ້ານການປະພຶດ.
ຕົວຢ່າງ	**1. ກ** ເປັນຜູ້ຖືກຈຳກັດ ຫຼື ຜູ້ເສຍຄວາມສາມາດທາງດ້ານການປະພຶດ ແລະ **ຂ** ເປັນຜູ້ປົກຄອງຂອງ **ກ** ຕາມຄຳຕັດສິນຂອງສານ. **2. ກ** ມີຊັບ ຄື: ທີ່ດິນພ້ອມເຮືອນຫ້ອງແຖວ 3 ຊັ້ນ 5 ຫ້ອງ, ມີລົດກະບະ 2 ຄັນ ແລະ ມີເງິນຝາກທະນາຄານ 100.000.000 ກີບ.

	ໃນຖານະ **ຂ** ເປັນຜູ້ປົກຄອງ **ກ** ຕ້ອງໄດ້ປະຕິບັດຕາມສິດ ແລະ ພັນທະຕົ້ນຕໍ ຕາມທີ່ກຳນົດໄວ້ໃນມາດຕາ 80 ຂອງປະມວນກົດໝາຍແພ່ງ ໃນການປົກຄອງ **ກ** ເຊັ່ນ: **ສິດຂອງຜູ້ປົກຄອງ:** **1.** **ຂ** ສາມາດຖອນເງິນຂອງ **ກ** ໄປເສຍພາສີທີ່ດິນ, ເສຍຄ່າທາງລົດ, ສ້ອມແປງລົດ, ຈ່າຍຄ່າສ້ອມແປງລົດ ຫຼື ເຮືອນ **ຂ** ເປັນຜູ້ຕາງໜ້າ **ກ** ສາມາດໃຫ້ຄຳປຶກສາ ຫຼື ຕາງໜ້າໃນການເຮັດສັນຍາເຊົ່າເຮືອນຫ້ອງແຖວກັບບຸກຄົນທີສາມ. **2.** ຖ້າ **ກ** ຕ້ອງການເຮັດສັນຍາກັບ **ຄ** ໃນການເອົາເຮືອນໃຫ້ **ຄ** ເຊົ່າ **ຂ** ຕ້ອງເປັນທີ່ປຶກສາ ເປັນຜູ້ຕາງໜ້າ ໃນການເຮັດສັນຍາດັ່ງກ່າວ. **ພັນທະຂອງຜູ້ປົກຄອງ:** **1.** **ກ** ເປັນຜູ້ປົກຄອງ **ຂ** ເປັນຜູ້ຖືກຈຳກັດ ຫຼື ຜູ້ເສຍຄວາມສາມາດທາງດ້ານການປະພຶດຕາມຄຳຕັດສິນຂອງສານ **ກ** ຕ້ອງໄດ້ເບິ່ງແຍງດູແລ ຄືກັບລູກຂອງຕົນເອງ ແລະ ຕ້ອງໄດ້ນຳ **ຂ** ໄປປິ່ນປົວໃນກໍລະນີ **ຂ** ເກີດການເຈັບເປັນ. **2.** ໃນກໍລະນີຫາກໄດ້ເຮັດໃຫ້ຊັບຂອງບຸກຄົນອື່ນເສຍຫາຍເຊັ່ນ: ເຮັດແວ່ນລົດຂອງ **ຄ** ແຕກ, ເຮັດໃຫ້ສັດລ້ຽງຂອງ **ງ** ຕາຍ ແລະ ອື່ນໆ **ກ** ມີພັນທະຕ້ອງໄດ້ໃຊ້ແທນ ຕົວຢ່າງ ຂໍ້ 3 ແລະ ຂໍ້ 4 ວັກ 2 ຂອງມາດຕານີ້ ໃຫ້ເບິ່ງຕົວຢ່າງກ່ຽວກັບສິດຂອງຜູ້ປົກຄອງເທົ່ານັ້ນ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງໃໝ່ເພື່ອໄຈ້ແຍກໃຫ້ເຫັນ ສິດ ແລະ ພັນທະ ຂອງຜູ້ປົກຄອງຜູ້ຖືກຈຳກັດ ຫຼື ຜູ້ເສຍຄວາມສາມາດທາງດ້ານການປະພຶດ ອອກຈາກການເປັນຜູ້ປົກຄອງຂອງເດັກ ໃຫ້ເຫັນຊັດເຈນກວ່າມາດຕາ 93 ຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ຊຶ່ງສິດ ແລະ ພັນທະຂອງຜູ້ປົກຄອງໄດ້ແຍກອອກໄປໄວ້ໃນພາກຄອບຄົວຂອງປະມວນກົດໝາຍໝາຍແພ່ງ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 56, 57, 58 ແລະ 59 ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2015 ; ມາດຕາ 857, 857/2, 858, 876/5 ແລະ 876/10 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 335 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ປີ 2012.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 81 ການປົດ,ການຂໍຖອນ ຫຼື ປ່ຽນຜູ້ຄຸ້ມຄອງ

ຜູ້ຄຸ້ມຄອງ ອາດຖືກປົດ, ຖອນຫຼືປ່ຽນຕົວ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ມີເງື່ອນໄຂບໍ່ຖືກຕ້ອງ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 79 ຂອງປະມວນກົດໝາຍສະບັບນີ້;
2. ເສຍຊີວິດ ຫຼື ຖືກສານຕັດສິນວ່າເປັນຜູ້ຫາຍສາບສູນ;

3. ໃນກໍລະນີທີ່ຜູ້ຄຸ້ມຄອງທີ່ແມ່ນອົງການຈັດຕັ້ງແລະອົງການຈັດຕັ້ງນັ້ນ ຢຸດການເຄື່ອນໄຫວ;
4. ບໍ່ມີຄວາມສາມາດໃນການປະຕິບັດໜ້າທີ່ຂອງຕົນ ຫຼື ປະຕິບັດໜ້າທີ່ຢ່າງບໍ່ເໝາະສົມ ຫຼື ລະເມີດພັນທະຢ່າງຮ້າຍແຮງໃນການເປັນຜູ້ຄຸ້ມຄອງ;
5. ສະເໜີຖອນຕົວຈາກການເປັນຜູ້ຄຸ້ມຄອງຍ້ອນຄວາມຈຳເປັນ.

ຈຸດປະສົງ	ເພື່ອກຳນົດກ່ຽວກັບການປົກປ້ອງສິດຜົນປະ�โยດຂອງຜູ້ຖືກຄຸ້ມຄອງ, ໃຫ້ຮູ້ວ່າໃນກໍ ລະນີໃດຈຶ່ງຖືວ່າຜູ້ຄຸ້ມຄອງນັ້ນບໍ່ມີຄຸນວຸທິ. ສະນັ້ນ, ເນື່ອງຈາກວ່າຜູ້ຄຸ້ມຄອງແມ່ນຜູ້ທີ່ປົກປ້ອງຜູ້ຖືກຄຸ້ມຄອງ (ຜູ້ຖືກຈຳກັດ ແລະ ເສຍຄວາມສາມາດທາງດ້ານການປະພຶດ) (ມາດຕາ 78 ຂອງປະມວນກົດໝາຍແພ່ງ)
ຕົວຢ່າງ	1. ໃນປີ 2015 **ຂ** ໄດ້ຖືກແຕ່ງຕັ້ງໃຫ້ເປັນຜູ້ປົກຄອງ **ກ** (ຜູ້ຖືກຈຳກັດ ຫຼື ຜູ້ເສຍຄວາມສາມາດທາງດ້ານການປະພຶດ) ຕາມຄຳຕັດສິນຂອງສານ, ຕໍ່ມາປີ 2016 **ຂ** ບໍ່ໄດ້ປະຕິບັດພັນທະໃນການເປັນຜູ້ປົກຄອງ ເຊັ່ນ: ບໍ່ເບິ່ງແຍງ **ກ**, ຂາຍຊັບຂອງ **ກ** ມາໃຊ້ເພື່ອຜົນປະ�โยດຂອງຕົນເອງ; 2. **ຂ** ຖືກແຕ່ງຕັ້ງໃຫ້ ເປັນຜູ້ປົກຄອງ **ກ** ແຕ່ **ຂ** ບໍ່ໄດ້ສົນໃຈວ່າ **ກ** ຈະເຮັດຫຍັງເຊັ່ນ ປ່ອຍໃຫ້ **ກ** ໄປເຮັດນິຕິກຳກັບບຸກຄົນອື່ນໂດຍ ບໍ່ໃຫ້ຄຳປຶກສາ ຫຼື ປ່ອຍໃຫ້ **ກ** ເຈັບເປັນໂດຍ ບໍ່ສົ່ງໄປປິ່ນປົວໃນສະຖານທີ່ໆເໝາະສົມ ຫຼື ໄປທຳຮ້າຍຮ່າງກາຍຜູ້ອື່ນຕະຫຼອດໂດຍບໍ່ໄດ້ເອົາໃຈໃສ່ດູແລ, ນຳໃຊ້ຊັບຂອງ **ກ** ເພື່ອຜົນປະ�โยດຂອງຕົນເອງ. 3. **ຂ** ເຄີຍເປັນນັກທຸລະກິດ ໄດ້ຖືກສານຕັດສິນໃຫ້ເປັນຜູ້ລົ້ມລະລາຍ ຈະບໍ່ສາມາດຖືກແຕ່ງຕັ້ງໃຫ້ເປັນຜູ້ປົກຄອງຂອງ **ກ** ໄດ້. 4. ຜ່ານມາ **ຂ** ເຄີຍຖືກແຕ່ງຕັ້ງໃຫ້ເປັນຜູ້ປົກຄອງຜູ້ໃດໜຶ່ງ ແລ້ວຜູ້ກ່ຽວໄດ້ທຳຮ້າຍຮ່າງກາຍຜູ້ຖືກປົກຄອງ ແລະ ຍັກຍອກຊັບຂອງຜູ້ຖືກປົກຄອງ, ດັ່ງນັ້ນ, **ຂ** ຈຶ່ງຖືກສານຕັດສິນຫ້າມເປັນຜູ້ຄຸ້ມຄອງ. **ຂ** ຈຶ່ງບໍ່ສາມາດເປັນຜູ້ປົກຄອງໄດ້ອີກ. 5. **ຂ** ເປັນອຳມະພິກ ຫຼື ຖືກສານຕັດສິນຕັດອິດສະລະພາບ ຫຼື **ຂ** ເສຍຊີວິດ ຫຼື ຖືກສານຕັດສິນປະກາດວ່າເປັນຜູ້ຫາຍສາບສູນ ຫຼື ຜູ້ປົກຄອງເອງສະເໜີຂໍຖອນໂຕຈາການເປັນຜູ້ປົກຄອງ ຫຼື ໃນກໍລະນີ **ຂ** ເຈັບເປັນຕ້ອງໄດ້ປິ່ນປົວເປັນເວລາຍາວນານ. ໃນກໍລະນີດັ່ງກ່າວ ກໍສາມາດປົດຈາກການເປັນຜູ້ປົກຄອງ. 6. ໂຮງຮຽນກົນນອນ **ຂ** ທີ່ເປັນຜູ້ປົກຄອງ **ກ** ທີ່ເປັນຜູ້ເສຍຄວາມສາມາດທາງດ້ານການປະພຶດ ມາໄດ້ 3 ປີ ມາຮອດປີ 2021 ໂຮງຮຽນດັ່ງກ່າວຖືກຍຸບເລີກ ແຕ່ **ກ** ຍັງຢູ່ໃນສະຖານະເດີມ ຈຶ່ງຈຳເປັນຕ້ອງໄດ້ປ່ຽນຜູ້ຄຸ້ມຄອງໃໝ່. 7. **ກ** ທີ່ເປັນຜູ້ຄຸ້ມຄອງ **ຂ** ທີ່ເປັນຜູ້ເສຍຄວາມສາມາດທາງດ້ານການປະພຶດ ໄດ້ນຳໃຊ້ ລົດຂອງ **ຂ** ເພື່ອ ຫາຜົນປະ�โยດສ່ວນຕົວ ຫຼື ເວລາ **ຂ** ເຈັບເປັນກໍບໍ່ ເບິ່ງແຍງ ຕາມຄວາມຈຳເປັນ ແລະ ເໝາະສົມ ເຊັ່ນ: ເວລາ **ຂ** ເຈັບເປັນ ສົມຄວນໄດ້ນຳໄປປິ່ນປົວຢູ່ໂຮງໝໍກໍບໍ່ພາໄປ ໃນເຮືອນມີຍຸງຫຼາຍ ກໍບໍ່ກາງມຸ້ງໃຫ້ **ຂ** ໃນເມື່ອເປັນແນວນັ້ນຕ້ອງໄດ້ປົດ ຫຼື ປ່ຽນຜູ້ຄຸ້ມຄອງໃໝ່. 8. ໃນກໍລະນີ **ກ** ຜູ້ຄຸ້ມຄອງ **ຂ** ໄດ້ຂໍຖອນຕົວຍ້ອນມີວຽກອື່ນທີ່ຈຳເປັນ ຊຶ່ງຈະເຮັດໃຫ້ການຄຸ້ມຄອງ **ຂ** ຂາດຕົກບົກພ່ອງ ຫຼື ບໍ່ມີເວລາດູແລ **ຂ** ໄດ້ ໃນກໍລະນີນີ້ ຕ້ອງໄດ້ປ່ຽນຜູ້ຄຸ້ມຄອງໃໝ່.

ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກມາດຕາ 46 ກົດໝາຍວ່າດ້ວຍ ຄອບຄົວ ປີ 2008 ເພາະວ່າ ໄດ້ກຳນົດການປ່ຽນຜູ້ປົກຄອງ ຢູ່ໃນມາດຕາດຽວກັນກັບການສິ້ນສຸດການເປັນຜູ້ປົກຄອງ ແລະ ມາດຕາ 46 ດັ່ງກ່າວ ໄດ້ກຳນົດການປ່ຽນ ຜູ້ປົກຄອງເດັກ ແລະ ຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດ ຢູ່ນຳກັນ. ສະນັ້ນ, ເພື່ອໃຫ້ເຂົ້າໃຈແຈ້ງ ແລະ ການນຳໃຊ້ ຈຶ່ງໄດ້ປັບປຸງ ໂດຍການແຍກອອກຈາກການປ່ຽນຜູ້ປົກຄອງ ສິ້ນສຸດການເປັນຜູ້ປົກຄອງ ແລະ ແຍກອອກຈາກກັນ ລະຫວ່າງການປ່ຽນຜູ້ປົກຄອງເດັກ ກັບຜູ້ຖືກຈຳກັດ ຫຼື ຜູ້ເສຍຄວາມສາມາດທາງດ້ານການປະພຶດ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 60 ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2015; ມາດຕາ 844 ແລະ 846 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 79 ແລະ 80 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 82 ການມອບການຄຸ້ມຄອງ

ເມື່ອມີການຖອນຕົວຫຼືປ່ຽນຕົວຜູ້ຄຸ້ມຄອງ, ຜູ້ຄຸ້ມຄອງເກົ່າ ຕ້ອງມອບການຄຸ້ມຄອງ ໃຫ້ ຜູ້ຄຸ້ມຄອງ ໃໝ່ ພາຍໃນສິບຫ້າວັນ ນັບແຕ່ວັນທີ່ໄດ້ມີການແຕ່ງຕັ້ງຜູ້ຄຸ້ມຄອງໃໝ່. ການມອບການຄຸ້ມຄອງ ຕ້ອງເຮັດບົດບັນທຶກ.

ເນື້ອໃນຂອງບົດບັນທຶກການມອບ ມີດັ່ງນີ້:

1. ເຫດຜົນຂອງການມອບ;
2. ບັນຊີຊັບສົມບັດຂອງຜູ້ຖືກຄຸ້ມຄອງ ໃນເວລາມອບ.

ນາຍບ້ານ ຫຼືສານເປັນຜູ້ຢັ້ງຢືນ ບົດບັນທຶກການມອບການຄຸ້ມຄອງ.

ສານເປັນຜູ້ຕົກລົງແຕ່ງຕັ້ງຜູ້ຄຸ້ມຄອງຄົນໃໝ່ ໃນກໍລະນີທີ່ມີການຂໍຖອນຕົວຫຼືມີການປ່ຽນຕົວຜູ້ຄຸ້ມຄອງ ຕາມທີ່ກຳນົດໄວ້ໃນມາດຕາ 81 ຂອງປະມວນກົດໝາຍສະບັບນີ້.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ ກ່ຽວກັບການກຳນົດເວລາ ແລະ ວິທີການ ຂອງການມອບການປົກຄອງ ໃນກໍລະນີມີການຖອນ ຫຼື ການປ່ຽນການປົກຄອງ ຂອງຜູ້ຖືກຈຳກັດ ຫຼື ຜູ້ເສຍຄວາມສາມາດທາງດ້ານການປະພຶດ.
ຕົວຢ່າງ	ໃນປີ 2015 **ຂ** ໄດ້ເປັນຜູ້ຄຸ້ມຄອງ **ກ** (ຜູ້ຖືກຈຳກັດ ຫຼື ຜູ້ເສຍຄວາມສາມາດທາງດ້ານການປະພຶດ) ຕາມຄຳຕັດສິນຂອງສານ, ຕໍ່ມາຕົ້ນປີ 2016 **ຂ** ບໍ່ໄດ້ປະຕິບັດພັນທະໃນການເປັນຜູ້ຄຸ້ມຄອງເຊັ່ນ: ບໍ່ເບິ່ງແຍ່ງ **ຂ**, ຂາຍຊັບຂອງ **ກ** ມາໃຊ້ຜົນປະໂຫຍດຂອງຕົນເອງ, ຈາກນັ້ນ, ວັນທີ 15 ມີນາ 2016 ພາຍຫຼັງທີ່ສານໄດ້ມີການພິຈາລະນາຮັບຮູ້ການແຕ່ງຕັ້ງ **ຄ** ເປັນຜູ້ຄຸ້ມຄອງຄົນໃໝ່ປ່ຽນແທນ **ຂ** ຜູ້ຄຸ້ມຄອງຜູ້ເກົ່າ. **ຂ** ຕ້ອງໄດ້ມອບການຕາງໜ້າໃຫ້ **ຄ** ໂດຍເຮັດບົດບັນທຶກເປັນລາຍລັກອັກສອນ ພາຍໃນກຳນົດ ສິບຫ້າວັນ ນັບແຕ່ວັນຄຳຕັດສິນໃຊ້ໄດ້ຢ່າງເດັດຂາດເປັນຕົ້ນໄປ ຊຶ່ງມີນາຍບ້ານ ຫຼື ສານ ເປັນຜູ້ເຊັນຢັ້ງຢືນການມອບດັ່ງກ່າວ ແລະ ເນື້ອໃນບົດບັນທຶກຊຶ່ງມີເນື້ອໃນຕາມ ມາດຕາ 82 ຂອງປະມວນກົດໝາຍແພ່ງ.

ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງຂຶ້ນໃໝ່ຍ້ອນວ່າກົດໝາຍຂອງ ສປປ ລາວ ບໍ່ໄດ້ກຳນົດກ່ຽວກັບການມອບການປົກຄອງ, ຖ້າຫາກເກີດມີກໍລະນີນີ້ໃນສັງຄົມ ຈະເຮັດໃຫ້ຫຍຸ້ງຍາກໃນການຈັດຕັ້ງປະຕິບັດຕົວຈິງ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 61 ແລະ 71 ຂອງປະມວນກົດໝາຍແພ່ງຫວຽດນາມ.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 83 ການສິ້ນສຸດການຄຸ້ມຄອງ

ການຄຸ້ມຄອງ ຈະສິ້ນສຸດໃນກໍລະນີໃດໜຶ່ງ ດັ່ງນີ້:

1. ຜູ້ຖືກຄຸ້ມຄອງ ໄດ້ມີຄວາມສາມາດທາງດ້ານການປະພຶດຄົບຖ້ວນ ຕາມການຕັດສິນຂອງສານ;
2. ຜູ້ຖືກຄຸ້ມຄອງເສຍຊີວິດ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ ແຕ່ລະກໍລະນີ ກ່ຽວກັບການສິ້ນສຸດການຄຸ້ມຄອງເຊັ່ນ ຜູ້ຖືກປົກຄອງຖືກຮັບຮູ້ກ່ຽວກັບການມີຄວາມສາມາດທາງດ້ານການປະພຶດຄືນ (ຢ່າງຄົບຖ້ວນ) ຕາມການຕັດສິນຂອງສານ ຫຼື ຜູ້ຖືກຄຸ້ມຄອງເສຍຊີວິດ
ຕົວຢ່າງ	1. **ກ** ຖືກແຕ່ງຕັ້ງໃຫ້ເປັນຜູ້ຄຸ້ມຄອງ **ຂ** ທີ່ເປັນຜູ້ຖືກຈຳກັດ ຫຼື ຜູ້ເສຍຄວາມສາມາດທາງດ້ານການປະພຶດ ຕາມຄຳຕັດສິນຂອງສານ ໃນປີ 2007, ຕໍ່ມາຮອດປີ 2015 **ຂ** ໄດ້ກັບຄືນມາສູ່ສະພາບປົກກະຕິ ຜູ້ກ່ຽວໄດ້ຮ້ອງຂໍຕໍ່ສານ ເພື່ອລົບລ້າງຄຳຕັດສິນທີ່ຮັບຮູ້ວ່າ **ຂ** ເປັນຜູ້ຖືກຈຳກັດ ຫຼື ຜູ້ເສຍຄວາມສາມາດທາງດ້ານການປະພຶດ. ສະນັ້ນ, ພາຍຫຼັງສານຕັດສິນລົບລ້າງການເປັນຜູ້ຖືກຈຳກັດ ຫຼື ຜູ້ເສຍຄວາມສາມາດທາງດ້ານການປະພຶດ ຜູ້ທີ່ສານຕັດສິນແຕ່ງຕັ້ງໃຫ້ເປັນຜູ້ຄຸ້ມຄອງກໍຈະສິ້ນສຸດໜ້າທີ່ການຄຸ້ມຄອງ ນັບແຕ່ວັນທີ່ມີຄຳຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດເປັນຕົ້ນ. 2. **ກ** ເປັນຜູ້ຄຸ້ມຄອງ **ຂ** ທີ່ເປັນຜູ້ຖືກຈຳກັດ ຫຼື ຜູ້ເສຍຄວາມສາມາດທາງດ້ານການປະພຶດ ຕາມຄຳຕັດສິນຂອງສານ ໃນປີ 2010, ຕໍ່ມາຮອດປີ 2015 **ຂ**ໄດ້ເສຍຊີວິດ, ນັບແຕ່ວັນ **ຂ** ເສຍຊີວິດເປັນຕົ້ນໄປ ຄື ວັນສິ້ນສຸດການຄຸ້ມຄອງຂອງ **ກ.**
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງໃໝ່ຍ້ອນວ່າກົດໝາຍທີ່ມີຢູ່ປັດຈຸບັນ ໄດ້ກຳນົດໃຫ້ຜູ້ຖືກຈຳກັດ ຫຼື ຜູ້ເສຍຄວາມສາມາດທາງດ້ານການປະພຶດຕາມຄຳຕັດສິນຂອງສານ ໃຫ້ມີຜູ້ປົກຄອງ ແຕ່ບໍ່ໄດ້ກຳນົດວ່າ ໃນກໍລະນີຜູ້ຖືກປົກຄອງເສຍຊີວິດ ການປົກຄອງນັ້ນ ຈະສິ້ນສຸດລົງເວລາໃດ. ສະນັ້ນ, ຈຶ່ງໄດ້ມີການປັບປຸງໃຫ້ມີການສິ້ນສຸດການປົກຄອງ ໂດຍແຍກເປັນມາດຕາຕ່າງຫາກ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 63 ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2015.
ມາດຕາອ້າງອີງ	ມາດຕາ 334 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງປີ 2012.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 84 ຜົນຂອງການສິ້ນສຸດການຄຸ້ມຄອງ

ເມື່ອຜູ້ຖືກຄຸ້ມຄອງ ຫາກມີຄວາມສາມາດທາງດ້ານການປະພຶດຄືນຢ່າງຄົບຖ້ວນ ຕາມການຕັດສິນຂອງສານ, ຜູ້ຄຸ້ມຄອງຕ້ອງໄດ້ໄລ່ລຽງ ແລະ ສົ່ງຄືນຊັບສົມບັດທີ່ຍັງເຫຼືອໃຫ້ຜູ້ຖືກຄຸ້ມຄອງ ພາຍໃນກຳນົດເວລາສາມ ເດືອນ ນັບແຕ່ວັນສິ້ນສຸດການຄຸ້ມຄອງ.

ໃນກໍລະນີ ທີ່ຜູ້ຖືກຄຸ້ມຄອງເສຍຊີວິດ,ຜູ້ຄຸ້ມຄອງຕ້ອງໄດ້ໄລ່ລຽງ ແລະ ສົ່ງຄືນຊັບສົມບັດທີ່ຍັງເຫຼືອໃຫ້ຜູ້ສືບທອດມູນມໍຣະດົກຂອງຜູ້ຖືກຄຸ້ມຄອງ ພາຍໃນກຳນົດເວລາສາມ ເດືອນ ນັບແຕ່ວັນສິ້ນສຸດການຄຸ້ມຄອງເປັນຕົ້ນໄປ. ສຳລັບການສືບທອດມູນມໍຣະດົກຂອງຜູ້ຖືກຄຸ້ມຄອງທີ່ເສຍຊີວິດນັ້ນ ໃຫ້ປະຕິບັດຕາມ ພາກທີ VIII ຂອງປະມວນກົດໝາຍສະບັບນີ້.

ຈຸດປະສົງ	ເພື່ອປ້ອງກັນບໍ່ໃຫ້ເກີດຂໍ້ຂັດແຍ່ງກ່ຽວກັບຊັບສົມບັດ ໃນເວລາສິ້ນສຸດການຄຸ້ມຄອງ ຜູ້ຄຸ້ມຄອງ ຕອ້ງໄດ້ເຮັດລາຍການຢ່າງຈະແຈ້ງ ໃນການໄລ່ລຽງຊັບສົມບັດທີ່ຕົນໄດ້ຄຸ້ມຄອງຢູ່.
ຕົວຢ່າງ	**1.** **ກ** ເປັນຜູ້ຖືກຈຳກັດ ຫຼື ຜູ້ເສຍຄວາມສາມາດທາງດ້ານການປະພຶດ ຕາມຄຳຕັດສິນຂອງສານ ໃນປີ 2007 ແລະ ສານໄດ້ແຕ່ງຕັ້ງ **ຂ** ເປັນຜູ້ຄຸ້ມຄອງ, ຕໍ່ມາຮອດປີ 2015 **ກ** ໄດ້ກັບຄືນມາສູ່ສະພາບປົກກະຕິ ຜູ້ກ່ຽວໄດ້ຮ້ອງຂໍຕໍ່ສານ ເພື່ອລົບລ້າງຄຳຕັດສິນທີ່ຮັບຮູ້ ວ່າ **ກ** ເປັນຜູ້ຖືກຈຳກັດ ຫຼື ຜູ້ເສຍຄວາມສາມາດທາງດ້ານການປະພຶດ. ໃນກໍລະນີດັ່ງກ່າວ **ຂ** ຜູ້ຄຸ້ມຄອງຂອງ **ກ** ຕ້ອງໄດ້ໄລ່ລຽງວ່າຊັບສົມບັດທັງໝົດມີຫຍັງແດ່ ໄດ້ນຳໃຊ້ເທົ່າໃດ ເຫດຜົນຂອງການນຳໃຊ້ ແລະ ສົ່ງຄືນຊັບສົມບັດທີ່ຍັງເຫຼືອໃຫ້ **ກ** ພາຍໃນກຳນົດເວລາສາມເດືອນ ນັບແຕ່ວັນສິ້ນສຸດການປົກຄອງເປັນຕົ້ນໄປ. **2.** ສານໄດ້ແຕ່ງຕັ້ງ **ຂ** ເປັນຜູ້ຄຸ້ມຄອງ **ກ** ເປັນຜູ້ຖືກຈຳກັດ ຫຼື ຜູ້ເສຍຄວາມສາມາດທາງດ້ານການປະພຶດ ຕາມຄຳຕັດສິນຂອງສານ ໃນປີ 2010. ຕໍ່ມາຮອດປີ 2015 **ກ** ໄດ້ເສຍຊີວິດ. ໃນກໍລະນີ ດັ່ງກ່າວ **ຂ** ທີ່ເປັນຜູ້ປົກຄອງຕ້ອງໄດ້ໄລ່ລຽງວ່າຊັບສົມບັດທັງໝົດມີຫຍັງແດ່ ໄດ້ນຳໃຊ້ເທົ່າໃດ ເຫດຜົນຂອງການນຳໃຊ້ ແລະ ສົ່ງຄືນຊັບສົມບັດທີ່ຍັງເຫຼືອໃຫ້ຜູ້ສືບທອດມູນມໍຣະດົກຂອງ **ກ** ພາຍໃນກຳນົດເວລາສາມເດືອນ ນັບແຕ່ວັນສິ້ນສຸດການເປັນຜູ້ປົກຄອງ. ສຳລັບການສືບທອດນັ້ນແມ່ນໃຫ້ປະຕິບັດຕາມ ພາກທີ VIII ຂອງປະມວນກົດໝາຍແພ່ງ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງໃໝ່ຍ້ອນໃຫ້ຜູ້ຖືກປົກຄອງ ມີກຳມະສິດຕໍ່ຊັບຂອງຕົນເອງ ເມື່ອຜູ້ກ່ຽວກັບຄືນມາມີຄວາມສາມາດທາງດ້ານການປະພຶດປົກກະຕິ ເພື່ອບໍ່ໃຫ້ຜູ້ປົກຄອງມີພັນທະຕໍ່ໄປ ຫຼື ສວຍໂອກາດເອົາຊັບສິ່ງຂອງຂອງຜູ້ຖືກປົກຄອງ ໃນເມື່ອຜູ້ຖືກປົກຄອງຫາກກັບຄືນສູ່ສະພາບປົກກະຕິ ຫຼື ເສຍຊີວິດ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 63 ແລະ 73 ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2015;
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ຈ. ບ່ອນຢູ່

ມາດຕາ 85 ບ່ອນຢູ່

ບ່ອນຢູ່ ຂອງບຸກຄົນ ແມ່ນບ່ອນບຸກຄົນນັ້ນ ໄດ້ຈົດທະບຽນສຳມະໂນຄົວ ຫຼື ບ່ອນຢູ່ຕົວຈິງ ຂອງຜູ້ກ່ຽວ.

ໃນກໍລະນີ ທີ່ບໍ່ສາມາດກຳນົດບ່ອນຢູ່ ຂອງບຸກຄົນໃດໜຶ່ງ ໃຫ້ຖືເອົາບ່ອນອາໄສຢູ່ສຸດທ້າຍ ຂອງບຸກຄົນນັ້ນເປັນບ່ອນຢູ່.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ ແລະ ສາມາດກຳນົດແນ່ນອນຂອງບ່ອນຢູ່ຂອງບຸກຄົນໃດໜຶ່ງ ຊຶ່ງມີບ່ອນຢູ່ຫຼາຍບ່ອນ ເຊັ່ນ: ບ່ອນຢູ່ຂອງບຸກຄົນ ເພື່ອສາມາດເຮັດໃຫ້ຜົນທາງກົດໝາຍເກີດຂຶ້ນໂດຍອີງໃສ່ບ່ອນຢູ່ ແລະ ສາມາດແກ້ໄຂບັນຫາທາງດ້ານກົດໝາຍ ເປັນຕົ້ນແມ່ນ ການຮັບຊາບເຈດຈຳນົງ (ຂອງຜູ້ສົ່ງ), ການປະກາດກ່ຽວກັບການຫາຍສາບສູນ, ການປະກາດການເສຍຊີວິດ ບົນພື້ນຖານບ່ອນຢູ່ໄດ້. ໃຫ້ຮູ້ບ່ອນຢູ່ຖາວອນ ຫຼື ບ່ອນຢູ່ສຸດທ້າຍ ຂອງບຸກຄົນ.
ຕົວຢ່າງ	**ກ** ໄດ້ຂຶ້ນສຳມະໂນຄົວຢູ່ບ້ານ **ຂ**, ເມືອງ **ຄ**, ແຂວງ **ງ** ແຕ່ຕົວຈິງຜູ້ກ່ຽວໄດ້ໄປດຳເນີນທຸລະກິດຢູ່ ບ້ານ **ຈ**, ເມືອງ **ສ**, ແຂວງ **ຊ** ບ່ອນຢູ່ທີ່ແນ່ນອນຂອງຜູ້ກ່ຽວ ແມ່ນກຳນົດເອົາບ່ອນທີ່ໄດ້ຂຶ້ນສຳມະໂນຄົວ ແມ່ນ ບ້ານ **ຂ**, ເມືອງ **ຄ**, ແຂວງ **ງ**. ຖ້າ **ກ** ບໍ່ມີສຳມະໂນຄົວ ກໍສາມາດ ກຳນົດເອົາບ້ານ **ຈ**, ເມືອງ **ສ,** ແຂວງ **ຊ** ທີ່ຜູ້ກ່ຽວອາໄສຢູ່ປັດຈຸບັນ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງໃໝ່ຍ້ອນກົດໝາຍຂອງລາວບໍ່ໄດ້ກຳນົດກ່ຽວກັບທີ່ຢູ່ທີ່ແນ່ນອນ ຂອງບຸກຄົນ ເພາະບາງຄົນມີທີ່ຢູ່ໆບ່ອນໜຶ່ງ ແຕ່ໄປເຮັກວຽກຢູ່ອີກບ່ອນໜຶ່ງ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 40 ຂອງປະມວນກົດໝາຍແພ່ງ ຫວຽດນາມ; ມາດຕາ 37 ຂອງປະມວນກົດໝາຍແພ່ງ ແລະ ພານິດ ໄທ; ມາດຕາ22 ແລະ 23 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 86 ບ່ອນຢູ່ຂອງຜູ້ບໍ່ພົ້ນກະສຽນອາຍຸ

ບ່ອນຢູ່ຂອງຜູ້ບໍ່ພົ້ນກະສຽນອາຍຸ ແມ່ນບ່ອນຢູ່ ຂອງພໍ່ແມ່, ຖ້າພໍ່ແມ່ ມີບ່ອນຢູ່ຕ່າງກັນນັ້ນ ບ່ອນຢູ່ ຂອງລູກ ແມ່ນບ່ອນຢູ່ ຂອງພໍ່ ຫຼື ແມ່ ທີ່ລູກໄດ້ອາໄສຢູ່ນຳ.

ຜູ້ບໍ່ພົ້ນກະສຽນອາຍຸ ອາດມີບ່ອນຢູ່ຕ່າງຫາກ ຕາມຄຳເຫັນດີ ຂອງພໍ່ແມ່ ຫຼື ພໍ່ ຫຼື ແມ່.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ ບ່ອນຢູ່ຂອງເດັກ ຫຼື ຜູ້ບໍ່ທັນພົ້ນກະສຽນອາຍຸ.
ຕົວຢ່າງ	1. **ກ** ອາຍຸ 15 ປີ ເປັນລູກຂອງ **ຂ** ແລະ **ຄ** ໄດ້ຂຶ້ນສຳມະໂນຄົວກັບພໍ່ແມ່ ບ່ອນຢູ່ຂອງ **ກ** ໃຫ້ຖືວ່າແມ່ນບ່ອນທີ່ພໍ່ແມ່ອາໄສຢູ່. ໃນກໍລະນີ ພໍ່ ແລະ ແມ່ຂອງ **ກ** ຫາກໄດ້ຢ່າຮ້າງກັນແລ້ວ ພໍ່ ແລະ ແມ່ ກໍໄດ້ແຍກ

	ຍ້າຍກັນໄປຢູ່ຄົນລະບ່ອນສານໄດ້ຕັດສິນໃຫ້ **ກ** ໄປຢູ່ນຳແມ່ທີ່ຢູ່ຂອງ **ກ** ແມ່ນທີ່ຢູ່ບ່ອນດຽວກັນກັບແມ່. ໃນກໍລະນີທີ່ **ກ** ໄດ້ໄປອາໄສຢູ່ນຳລຸງ ຢູ່ບ່ອນອື່ນຕາມການເຫັນດີຂອງພໍ່ແມ່ ກໍໃຫ້ກຳນົດເອົາບ່ອນຢູ່ຂອງລຸງເປັນບ່ອນຢູ່ຂອງເດັກ. 2. **ດ** ອາຍຸ 14 ປີ ໄດ້ຍ້າຍຈາກແຂວງ **ກ** ມາຢູ່ບ້ານ **ຂ**, ເມືອງ **ຄ**, ແຂວງ **ງ** ນຳອາວ, ອາ ເພື່ອຮຽນໜັງສື ໂດຍໄດ້ຮັບຄຳເຫັນດີຈາກພໍ່ແມ່ ຖືວ່າເດັກມີບ່ອນຢູ່ບ່ອນທີ່ ອາວ, ອາ ດຳລົງຊີວິດຢູ່.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງໃໝ່ຍ້ອນວ່າກົດໝາຍບໍ່ໄດ້ກຳນົດທີ່ຢູ່ຂອງເດັກ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 41 ຂອງປະມວນກົດໝາຍແພ່ງ ຫວຽດນາມ; ມາດຕາ 821 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 87 ບ່ອນຢູ່ຂອງຜູ້ຖືກປົກຄອງ

ບ່ອນຢູ່ຂອງຜູ້ຖືກປົກຄອງ ແມ່ນບ່ອນຢູ່ຂອງຜູ້ປົກຄອງ.

ຜູ້ຖືກປົກຄອງ ອາດມີບ່ອນຢູ່ຕ່າງຫາກ ຕາມຄຳເຫັນດີຂອງຜູ້ປົກຄອງ ຫຼື ຕາມທີ່ໄດ້ກຳນົດໃນກົດໝາຍ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ ບ່ອນຢູ່ຂອງຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດ.
ຕົວຢ່າງ	**ກ** ເປັນຜູ້ທີ່ຖືກຈຳກັດຄວາມສາມາດທາງດ້ານການປະພຶດ ຫຼື ເສຍຄວາມສາມາດທາງດ້ານການປະພຶດ ຊຶ່ງ **ຂ** ເປັນຜູ້ປົກຄອງ ໃນກໍລະນີ **ກ** ຢູ່ ນຳ **ຂ** ບ່ອນຢູ່ຂອງ **ກ** ຜູ້ທີ່ຖືກຈຳກັດຄວາມສາມາດທາງດ້ານການປະພຶດ ຫຼື ເສຍຄວາມສາມາດທາງດ້ານການປະພຶດແມ່ນບ່ອນທີ່ຜູ້ປົກຄອງອາໄສຢູ່. ກໍລະນີ **ກ** ຫາກອາໄສຢູ່ຕ່າງຫາກກັບຄົນອື່ນເຊັ່ນ: ລຸງ ປ້າ, ອ້າຍ, ເອື້ອຍ ໂດຍບໍ່ແມ່ນຜູ້ປົກຄອງຕາມການເຫັນດີຂອງ **ຂ** ບ່ອນຢູ່ຂອງ **ກ** ກໍແມ່ນບ່ອນທີ່ຜູ້ກ່ຽວອາໄສຢູ່ນຳນັ້ນ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງໃໝ່ຍ້ອນວ່າກົດໝາຍຂອງ ສປປ ລາວ ບໍ່ໄດ້ກຳນົດທີ່ຢູ່ຂອງຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 42 ຂອງກົດໝາຍແພ່ງ ຫວຽດນາມ ປີ 2015.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 88 ບ່ອນຢູ່ຂອງຜົວເມຍ

ບ່ອນຢູ່ຂອງຜົວເມຍ ແມ່ນບ່ອນທີ່ທັງສອງດຳລົງຊີວິດຮ່ວມກັນ.

ຜົວເມຍ ອາດມີບ່ອນຢູ່ຕ່າງຫາກ ຕາມການຕົກລົງຂອງພວກກ່ຽວ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ ບ່ອນຢູ່ຂອງຜົວເມຍທີ່ຢູ່ຮ່ວມກັນ ແລະ ໃນກໍລະນີ ຜົວເມຍ ແຍກກັນຢູ່.
ຕົວຢ່າງ	**ກ** ແລະ **ຂ** ໄດ້ແຕ່ງງານກັນ ແລ້ວໄດ້ພາກັນຍ້າຍໄປຢູ່ເຮືອນເລກທີ 5 ບ້ານ **ຄ** ເມືອງ **ງ** ແຂວງ **ຈ** ແລະ ໄດ້ຂຶ້ນສຳມະໂນຄົວຢູ່ທີ່ນັ້ນ ບ່ອນຢູ່ຂອງ **ກ** ແລະ **ຂ** ຖືວ່າຢູ່ເຮືອນເລກທີ 5 ບ້ານ **ຄ** ເມືອງ **ງ** ແຂວງ **ຈ.** ຢູ່ຕໍ່ມາ **ກ** ແລະ **ຂ** ໄດ້ເກີດມີຄວາມບໍ່ເຂົ້າໃຈກັນ ໄດ້ຕົກລົງແຍກກັນຢູ່ຄົນລະບ່ອນ ຊຶ່ງ **ກ** ກັບໄປຢູ່ບ້ານ **ສ**, ເມືອງ **ຍ** ຖືວ່າ **ກ** ແລະ **ຂ** ມີທີ່ຢູ່ຄົນລະບ່ອນຕ່າງກັນ ຜູ້ໃດຢູ່ບ່ອນໃດກໍໃຫ້ຖືເອົາບ່ອນທີ່ຜູ້ກ່ຽວອາໄສຢູ່ປັດຈຸບັນເປັນບ່ອນຢູ່. ໃນກໍລະນີ **ກ** ແລະ **ຂ** ໄດ້ຕົກລົງກັນຢູ່ຕ່າງຫາກ ເຊັ່ນ: **ກ** ໄປເຮັດວຽກຢູ່ແຂວງ **ຊ** ສ່ວນ **ຂ** ຢູ່ ແຂວງ **ຈ** ກັບລູກເພື່ອການສຶກສາຂອງລູກ ທີ່ຢູ່ ຂອງ **ກ** ແມ່ນຢູ່ ແຂວງ **ຊ** ສ່ວນ **ຂ** ແມ່ນຢູ່ແຂວງ **ຈ.**
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງໃໝ່ຍ້ອນວ່າກົດໝາຍຂອງ ສປປ ລາວ ບໍ່ໄດ້ກຳນົດບ່ອນຢູ່ຂອງຜົວເມຍ ໃນກໍລະນີຢູ່ບ່ອນດຽວກັນ ແລະ ກໍລະນີ ມີບ່ອນຢູ່ຄົນລະບ່ອນ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 43 ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2015.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 89 ບ່ອນຢູ່ຂອງທະຫານ, ຕຳຫຼວດ

ບ່ອນຢູ່ ຂອງນາຍ ແລະ ພົນທະຫານ, ຕຳຫຼວດ ແລະ ພະນັກງານທີ່ເຮັດໜ້າທີ່ປະຈຳການ ປ້ອງກັນຊາດ ແລະ ປ້ອງກັນຄວາມສະຫງົບ ແມ່ນບ່ອນບຸກຄົນນັ້ນເຮັດວຽກ ຫຼື ບ່ອນປະຈຳການຂອງຜູ້ກ່ຽວ ເວັ້ນເສຍແຕ່ ກໍລະນີຜູ້ທີ່ມີບ່ອນຢູ່ປົກກະຕິ.

ບ່ອນຢູ່ຂອງທະຫານພັນທະ ແມ່ນກົມກອງທີ່ຜູ້ກ່ຽວ ເຮັດວຽກ ຫຼື ປະຈຳການ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ບ່ອນຢູ່ຂອງທະຫານ, ຕຳຫຼວດ ກໍລະນີໃດ ທີ່ມີບ່ອນຢູ່ເປັນບ່ອນປະຈຳການ ຫຼື ກົມກອງ, ມີບ່ອນຢູ່ປົກກະຕິ ແລະ ບ່ອນຢູ່ຂອງທະຫານພັນທະ.
ຕົວຢ່າງ	1. **ກ** ເປັນທະຫານ ປະຈຳການ ແລະ ອາໄສຢູ່ຫໍພັກ ຂອງຄ້າຍ **ຂ**, ບ່ອນຢູ່ຂອງຜູ້ກ່ຽວ ແມ່ນຄ້າຍ **ຂ.** 2. **ກ** ອາໄສຢູ່ ບ້ານ **ງ** ເມືອງ **ຈ** ແຂວງ **ສ**, **ກ** ເປັນຕຳຫຼວດ ສັງກັດຢູ່ກອງບັນຊາການ ປກສ ເມືອງ **ຊ**, ບ່ອນຢູ່ຂອງຜູ້ກ່ຽວແມ່ນບ້ານ **ງ** ນັ້ນ. 3. **ຄ** ເປັນທະຫານພັນທະ ຖືກໄປປະຈຳການຢູ່ກອງບັນຊາການແຂວງ **ຊ**, ສະນັ້ນ ບ່ອນຢູ່ຂອງ **ຄ** ແມ່ນບ່ອນປະຈຳການ(ກອງບັນຊາການແຂວງ **ຊ**).
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງໃໝ່ຍ້ອນວ່າກົດໝາຍບໍ່ໄດ້ກຳນົດບ່ອນຢູ່ຂອງທະຫານ, ຕຳຫຼວດ ຈຶ່ງກຳນົດມາດຕານີ້ຂຶ້ນມາເພາະວ່າ ທະຫານ ແລະ ຕຳຫຼວດ ມັກຈະໄດ້ໄປ ປະຈຳ ການຢູ່ບ່ອນຕ່າງໆ ອີງຕາມຄວາມຮຽກຮ້ອງຕ້ອງການຂອງວຽກງານ.

ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 44 ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2015.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 90 ບ່ອນຢູ່ຂອງນັກໂທດ

ບ່ອນຢູ່ຂອງນັກໂທດທີ່ຖືກສານຕັດສິນ ຕັດອິດສະລະພາບ ແມ່ນຄ້າຍດັດສ້າງບ່ອນທີ່ຜູ້ກ່ຽວຖືກດັດສ້າງຢູ່ນັ້ນ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ກ່ຽວກັບບ່ອນຢູ່ຂອງນັກໂທດ ຍ້ອນວ່ານັກໂທດແມ່ນຖືກກັກຂັງຢູ່ຄ້າຍຄຸມຂັງດັດສ້າງ ບໍ່ແມ່ນບ່ອນຢູ່ຂອງຜູ້ກ່ຽວທີ່ໄດ້ຂຶ້ນສຳມະໂນຄົວເພາະໃນກໍລະນີ ຈຳເປັນຕ້ອງໃຫ້ຮູ້ວ່າຜູ້ກ່ຽວຢູ່ບ່ອນໃດ.
ຕົວຢ່າງ	**ກ** ຖືກສານຕັດສິນລົງໂທດຕັດອິດສະລະພາບ ແລະ ຜູ້ກ່ຽວຖືກກັກຂັງຢູ່ຄ້າຍຄຸມຂັງ-ດັດສ້າງ **ຄ**, ເມືອງ **ຄ**, ແຂວງ **ງ**, ບ່ອນຢູ່ ຂອງ **ກ** ແມ່ນຢູ່ຄ້າຍຄຸມຂັງ-ດັດສ້າງ **ຄ** ນັ້ນ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງໃໝ່ຍ້ອນວ່າກົດໝາຍ ບໍ່ໄດ້ກຳນົດກ່ຽວກັບບ່ອນຢູ່ ຂອງນັກໂທດ ຈຶ່ງໄດ້ສ້າງມາດຕານີ້ຂຶ້ນມາການກຳນົດບ່ອນຢູ່ຂອງນັກໂທດ ກໍຍ້ອນວ່ານັກໂທດແມ່ນຖືກກັກຂ້ອງຢູ່ຄ້າຍຄຸມຂັງ ດັດສ້າງ ບໍ່ແມ່ນບ່ອນຢູ່ຂອງຜູ້ກ່ຽວທີ່ໄດ້ຂຶ້ນສຳມະໂນຄົວ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 47 ປະມວນກົດໝາຍແພ່ງ ແລະ ພານິດ ໄທ.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 91 ບ່ອນຢູ່ຂອງຄົນຕ່າງປະເທດ, ຄົນຕ່າງດ້າວ ຫຼື ຄົນບໍ່ມີສັນຊາດ

ຄົນຕ່າງປະເທດ ທີ່ເຂົ້າມາເຮັດວຽກ ຫຼື ທ່ອງທ່ຽວ ຢູ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນ ລາວ ໃຫ້ຖືເອົາບ່ອນທີ່ພວກກ່ຽວ ໄດ້ແຈ້ງຕໍ່ເຈົ້າໜ້າທີ່ຕຳຫຼວດກວດກາຄົນເຂົ້າເມືອງເປັນບ່ອນຢູ່ອາໄສ.

ບ່ອນຢູ່ຂອງຄົນຕ່າງດ້າວ ຫຼື ຄົນບໍ່ມີສັນຊາດ ແມ່ນບ່ອນບຸກຄົນນັ້ນໄດ້ຈົດທະບຽນຄອບຄົວ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ບ່ອນຢູ່ຂອງຄົນຕ່າງປະເທດ, ຄົນຕ່າງດ້າວຫຼືຄົນບໍ່ມີສັນຊາດ
ຕົວຢ່າງ	1. **ກ** ເປັນຄົນສັນຊາດປະເທດ **ຂ** ແລະ ເປັນຊ່ຽວຊານ ເຂົ້າມາເຮັດວຽກ ຢູ່ ສປປ ລາວ ໄດ້ແຈ້ງເຂົ້າຢູ່ດ່ານຕຳຫຼວດກວດຄົນເຂົ້າເມືອງ ວ່າ ຜູ້ກ່ຽວພັກຢູ່ໂຮງແຮມ **ຄ**, ບ່ອນຢູ່ຂອງ **ກ** ແມ່ນ ໂຮງແຮມ **ຄ**. 2. **ກ** ເປັນນັກທ່ອງທ່ຽວຕ່າງປະເທດ **ຂ** ເຂົ້າມາທ່ອງທ່ຽວ ຢູ່ ສປປ ລາວ ແລະ ໄດ້ແຈ້ງເຂົ້າຢູ່ດ່ານຕຳຫຼວດກວດຄົນເຂົ້າເມືອງວ່າ ຜູ້ກ່ຽວພັກຢູ່ໂຮງແຮມ **ຄ,** ບ່ອນຢູ່ຂອງ **ກ** ແມ່ນ ໂຮງແຮມ **ຄ.** 3. **ກ** ເປັນຄົນສັນຊາດປະເທດ **ຂ,** ອາໄສຢູ່ບ້ານ **ງ** ເມືອງ **ຊ** ແຂວງ **ສ** ແລະ ຂຶ້ນທະບຽນຄົນຕ່າງດ້າວ ຕາມບ່ອນຢູ່ດັ່ງກ່າວ, ບ່ອນຢູ່ຂອງຜູ້

	ກ່ຽວແມ່ນຕາມທີ່ຜູ້ກ່ຽວໄດ້ແຈ້ງຂຶ້ນທະບຽນຄົນຕ່າງດ້າວນັ້ນ. 4. **ກ** ເປັນຄົນບໍ່ມີສັນຊາດ ອາໄສຢູ່ບ້ານ **ງ** ເມືອງ **ຊ** ແຂວງ **ສ** ແລະ ຂຶ້ນທະບຽນຄົນບໍ່ມີສັນຊາດ, ບ່ອນຢູ່ຂອງຜູ້ກ່ຽວ ແມ່ນຕາມທີ່ຜູ້ກ່ຽວໄດ້ແຈ້ງຂຶ້ນທະບຽນຄົນບໍ່ມີສັນຊາດນັ້ນ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງໃໝ່ຍ້ອນວ່າກົດໝາຍ ບໍ່ໄດ້ມີການກຳນົດ ກ່ຽວກັບບ່ອນຢູ່ຂອງຄົນຕ່າງປະເທດ, ຄົນຕ່າງດ້າວ ຫຼື ຄົນບໍ່ມີສັນຊາດ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນຫຼື ປະເພນີສານ	ແນວຄວາມຄິດ (ລະບຽບການກ່ຽວກັບການກວດກາຄົນເຂົ້າເມືອງ; ລະບຽບການ ກ່ຽວກັບການຄຸ້ມຄອງຄົນຕ່າງດ້າວ ແລະ ຄົນບໍ່ມີສັນຊາດ)

ສ. ການຫາຍສາບສູນ ແລະ ການເສຍຊີວິດຕາມຄຳຕັດສິນຂອງສານ

ມາດຕາ 92 ການຫາຍສາບສູນ

ການຫາຍສາບສູນ ແມ່ນ ການທີ່ບຸກຄົນໃດໜຶ່ງ ໄດ້ຫາຍໄປ ຈາກຄອບຄົວ ຫຼື ບ່ອນຢູ່ຂອງຕົນ ໂດຍບໍ່ ຮູ້ຂ່າວຄາວ ເປັນເວລາ ສອງປີ ຂຶ້ນໄປ ຫຼື ໄດ້ຫາຍໄປໃນສົງຄາມ, ໄພພິບັດ ຫຼື ອຸບປະຕິເຫດ ເປັນເວລາ ຫົກເດືອນ ຂຶ້ນໄປ, ບຸກຄົນນັ້ນ ຈະຖືວ່າເປັນຜູ້ຫາຍສາບສູນໄດ້ ກໍຕໍ່ເມື່ອມີຄຳຕັດສິນຂອງສານ.

ກຳນົດເວລາການຫາຍສາບສູນ ແມ່ນໃຫ້ນັບແຕ່ວັນໄດ້ຮັບຂ່າວຄັ້ງສຸດທ້າຍ ກ່ຽວກັບບຸກຄົນນັ້ນ ເປັນຕົ້ນໄປ, ຖ້າຫາກບໍ່ສາມາດກຳນົດວັນດັ່ງກ່າວໄດ້ ໃຫ້ນັບວັນທີໜຶ່ງຂອງເດືອນຖັດໄປ ແລະ ຖ້າບໍ່ສາມາດກຳນົດເດືອນ ກໍໃຫ້ນັບວັນທີໜຶ່ງ ເດືອນມັງກອນ ຂອງປີຖັດໄປ.

ກຳນົດເວລາການຫາຍສາບສູນ ໃນກໍລະນີເກີດອຸບັດຕິເຫດ ໃຫ້ນັບແຕ່ວັນເກີດອຸບັດຕິເຫດນັ້ນ ເປັນຕົ້ນໄປ. ສຳລັບກໍລະນີສົງຄາມ ຫຼື ໄພພິບັດ ໃຫ້ນັບແຕ່ວັນສິ້ນສຸດເຫດການດັ່ງກ່າວ ເປັນຕົ້ນໄປ.

ຈຸດປະສົງ	ເພື່ອກຳນົດຄວາມໝາຍຂອງການຫາຍສາບສູນຂອງບຸກຄົນໃດໜຶ່ງ ແລະ ເງື່ອນໄຂຂອງການຫາຍສາບສູນ ເພື່ອເປັນພື້ນຖານໃຫ້ສານພິຈາລະນາຕັດສິນ.
ຕົວຢ່າງ	1. **ກໍລະນີປົກກະຕິ**: ວັນທີ 1 ມັງກອນ ປີ 2019, **ກ** ບອກກັບຄອບຄົວວ່າຈະໄປເຮັດວຽກຢູ່ຕ່າງແຂວງ ແລະ ເຂົ້າເຮັດວຽກຢູ່ ຢູ່ບໍລິສັດແຫ່ງໜຶ່ງ ໃນແຂວງນັ້ນ. ນັບແຕ່ວັນທີ 7 ມັງກອນ 2019 ເມຍຂອງ **ກ** ບໍ່ໄດ້ຮັບຂ່າວ ຈາກ **ກ** ອີກເລີຍ **ຂ** ເມຍຂອງ **ກ** ຈຶ່ງໄດ້ຊອກຫາ ແລະ ຖາມຍາດຕິພີ່ນ້ອງ ແລະ ໃຫ້ບໍລິສັດ ຊ່ວຍປະກາດຫາ ຈົນຮອດເດືອນ ທັນວາ 2022, ເມຍ ຂອງ **ກ** ໄດ້ສືບຖາມກັບຜູ້ຮູ້ຈັກແລ້ວ ຍັງບໍ່ຮູ້ວ່າ **ກ** ຢູ່ໃສ ແລະ ຂໍໃຫ້ອົງການປົກຄອງບ້ານບ່ອນທີ່ **ກ** ອາໄສຢູ່ບ່ອນສຸດທ້າຍ ອອກໜັງສືຢັ້ງຢືນ ໃຫ້ວ່າ **ກ** ບໍ່ໄດ້ຢູ່ນັບແຕ່ ວັນທີ 7 ມັງກອນ 2019 ແລະ ບໍລິສັດ ກໍໄດ້ຢັ້ງຢືນໃຫ້ ເຊັ່ນດຽວກັນ, **ຂ** ຈຶ່ງຍື່ນຄຳຮ້ອງຂໍຕໍ່ສານໃຫ້ພິຈາລະນາໃຫ້ປະກາດວ່າ **ກ** ເປັນຜູ້ຫາຍສາບສູນໄດ້.

	2. **ກໍລະນີໄພພິບັດ:** ໃນວັນທີ 5 ມັງກອນ 2021 **ກ** ໄດ້ຂັບລົດຂຶ້ນໄປສິ່ງເຄື່ອງ ຢູ່ແຂວງ **ຄ** ຕ້ອງໃຊ້ເວລາເດີນທາງ 2 ວັນ ຈຶ່ງຮອດ ແຕ່ **ກ** ເດີນທາງ ໄດ້ວັນດຽວ ໄດ້ເກີດມີພາຍຸລົມແດງເປັນເວລາເຄິ່ງວັນຈຶ່ງສະຫງົບ **ຂ** ຜູ້ເປັນເມຍ ບໍ່ໄດ້ຮັບຂ່າວຄາວ **ກ** ນັບແຕ່ວັນນັ້ນເປັນຕົ້ນມາ ການຫາຍສາບສູນຂອງ **ກ** ເລີ່ມນັບ ແຕ່ວັນທີ 6 ມັງກອນ 2021 ເປັນຕົ້ນມາ ຈົນຄົບກຳນົດເວລາ 6 ເດືອນ ສານຈຶ່ງສາມາດຕັດສິນວ່າ **ກ** ເປັນຜູ້ຫາຍສາບສູນ ໄດ້. 3. **ກໍລະນີອຸບປະຕິເຫດ**: ໃນວັນທີ 1 ມັງກອນ 2022 **ກ** ເດີນທາງໄປຕ່າງປະເທດໂດຍສາຍການບິນໜຶ່ງ ແລະ ເກີດອຸບປະຕິເຫດ ເຮືອບິນຕົກ ພາໃຫ້ຜູ້ໂດຍສານ ຈຳນວນໜຶ່ງເສຍຊີວິດ ແຕ່ຍັງຊອກຊາກສົບ ຂອງ **ກ** ບໍ່ເຫັນ ແລະ **ຂ** ເມຍ ຂອງ **ກ** ໄດ້ສອບຖາມນຳຄະນະກຳມະການ ຮັບຜິດຊອບອຸບປະຕິເຫດທີ່ຢູ່ຕ່າງປະເທດ ແລະ ໄດ້ລົງໜັງສືພິມປະກາດຫາ **ກ** ແຕ່ຜ່ານໄປ ເກົ້າເດືອນ ນັບແຕ່ມື້ເຮືອບິນຕົກ ຍັງຊອກຊາກສົບບໍ່ເຫັນ ແລະ ບໍ່ຮູ້ໄດ້ວ່າ **ກ** ຍັງມີຊີວິດ ຫຼື ບໍ່ ວັນທີ 1 ຕຸລາ 2022. ເມຍ ຂອງ **ກ** ຈຶ່ງຍື່ນຄຳຮ້ອງຂໍສະເໜີໃຫ້ສານພິຈາລະນາຕັດສິນວ່າ **ກ** ເປັນຜູ້ຫາຍສາບສູນ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ຫຼັກການກ່ຽວກັບ “ການຫາຍສາບສູນ” ຂອງບຸກຄົນທີ່ກຳນົດໄວ້ໃນ ສອງ ກົດໝາຍ ຄື: 1. ກົດໝາຍວ່າດ້ວຍທະບຽນຄອບຄົວ ປີ 2018, ມາດຕາ 3, ຂໍ້ 3 ຂອງ ກຳນົດວ່າ “ການຫາຍສາບສູນ ໝາຍເຖິງ ເຫດການທີ່ບຸກຄົນໃດໜຶ່ງໄດ້ຫາຍໄປຈາກຄອບຄົວ ໂດຍບໍ່ຮູ້ບ່ອນຢູ່ ແລະ ບໍ່ຮູ້ຂ່າວຄາວ ເປັນເວລາສອງປີ ຫຼື ກໍລະນີທີ່ເກີດອຸບປະຕິເຫດຫາກບໍ່ຮູ້ຂ່າວຄາວເປັນເວລາຫົກເດືອນ ໂດຍມີຄຳຕັດສິນຂອງສານ. 2. ກົດໝາຍວ່າດວ້ຍການດຳເນີນຄະດີແພ່ງ 2012, ວັກສອງ ຂອງ ມາດຕາ 337 (ໃໝ່) ທີ່ກຳນົດວ່າ ສຳລັບຄຳຮ້ອງຂໍໃຫ້ສານປະກາດວ່າບຸກຄົນໃດໜຶ່ງເປັນຜູ້ຫາຍສາບສູນນັ້ນ ຕ້ອງບົ່ງບອກວ່າ ບຸກຄົນດັ່ງກ່າວໄດ້ຫາຍໄປຈາກຄອບຄົວ ໂດຍຂາດການຕິດຕໍ່ເປັນເວລາສອງປີ ຫຼື ໃນກໍລະນີອຸບປະຕິເຫດຫາກບໍ່ຮູ້ຂ່າວຄາວເປັນເວລາ ຫົກເດືອນ ພ້ອມທັງຄັດຕິດເອກະສານທີ່ຢັ້ງຢືນວ່າ ໄດ້ຊອກຫາດ້ວຍການແຈ້ງຄວາມ, ປະກາດ ຫຼື ດ້ວຍວິທີການອື່ນແລ້ວ... ບົດບັນຍັດເຫຼົ່ານັ້ນ ບໍ່ໄດ້ກຳນົດຊ່ວງເວລາທີ່ແນ່ນອນ ໃຫ້ແກ່ການນັບອາຍຸຄວາມຂອງການຫາຍສາບສູນ ສະນັ້ນ, ມາດຕານີ້ ຈຶ່ງມີການປັບປຸງ ເພີ່ມຫຼັກການໃນການຄິດໄລ່ອາຍຸຄວາມໃສ່ໃນວັກສອງ ແລະ ວັກສາມ ຂອງມາດຕານີ້ ເພື່ອສະດວກໃນການຄິດໄລ່ ຢ່າງເປັນເອກະພາບຂອງສານ ໃນການພິຈາລະນາຕັດສິນຄຳຮ້ອງຂໍໃຫ້ສານປະກາດການຫາຍສາບສູນ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 61 ຂອງປະມວນກົດໝາຍແພ່ງໄທ; ມາດຕາ 68 ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2015; ມາດຕາ 30 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ; ມາດຕາ 122 ຂອງປະມວນກົດໝາຍແພ່ງຝຣັ່ງ.

ມາດຕາອ້າງອີງ	ມາດຕາ 3, ຂໍ້ 3 ຂອງກົດໝາຍວ່າດ້ວຍທະບຽນຄອບຄົວ ປີ 2018; ມາດຕາ 337 (ໃໝ່) ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງຂອງ ສປປ ລາວ ປີ 2012.
ຂໍ້ມູນອື່ນ ຫຼື ປະເພນີສານ	**ຂໍ້ສັງເກດ:** 1. ປະມວນກົດໝາຍແພ່ງຂອງຫຼາຍປະເທດກຳນົດ "ຜູ້ບໍ່ຢູ່" ກ່ອນໃນໄລຍະເວລາໃດໜຶ່ງ ຫາກບໍ່ໄດ້ຮັບຂ່າວຈາກບຸກຄົນດັ່ງກ່າວ ຈຶ່ງມີສິດສະເໜີຕໍ່ສານ ເພື່ອແຕ່ງຕັ້ງຜູ້ຄຸ້ມຄອງຊັບສິນບັດຂອງຜູ້ກ່ຽວ (ແຕ່ບໍ່ແມ່ນແບ່ງປັນຊັບສິນ ບັດຂອງຜູ້ກ່ຽວ). 2. ອາຍຸຄວາມຂອງກົດໝາຍແຕ່ລະປະເທດ: - ປະມວນກົດໝາຍແພ່ງຂອງຫວຽດນາມ ກຳນົດ 2 ປີ ນັບແຕ່ວັນທີ່ຮູ້ຂ່າວສຸດທ້າຍ ຂອງຜູ້ບໍ່ຢູ່, **ແຕ່ບໍ່ມີບົດບັນຍັດໃນກໍລະນີອຸບປະຕິເຫດ ຫຼື ເຫດການທີ່ເປັນອັນຕະລາຍເຖິງຊີວິດ**; - ປະມວນກົດໝາຍແພ່ງຂອງໄທ ແລະ ຂອງກຳປູເຈຍກຳນົດ 5 ປີ ນັບແຕ່ວັນທີ່ຮູ້ຂ່າວສຸດທ້າຍຂອງຜູ້ບໍ່ຢູ່; ແຕ່ໃນກໍລະນີອຸບປະຕິເຫດ ຫຼື ເຫດ ການທີ່ເປັນອັນຕະລາຍເຖິງຊີວິດ ກຳນົດເວລານີ້ ຈະຫຼຸດລົງເຫຼືອ 2 ປີ ຕາມປະມວນກົດໝາຍແພ່ງໄທ ແລະ 1 ປີ ຕາມປະມວນກົດໝາຍແພ່ງກຳປູເຈຍ; - ສ່ວນປະມວນກົດໝາຍແພ່ງຂອງຍີປຸ່ນກຳນົດເວລາ 7 ປີ ສຳລັບເງື່ອນໄຂການປະກາດວ່າຫາຍສາບສູນ ແລະ ໃນກໍລະນີອຸບປະຕິເຫດ ຫຼື ເຫດ ການທີ່ເປັນເປັນອັນຕະລາຍເຖິງຊີວິດ ອາຍຸຄວາມຫຼຸດລົງເຫຼືອ 1 ປີ. - ປະມວນກົດໝາຍແພ່ງຝຣັ່ງກຳນົດອາຍຸຄວາມສຳລັບການປະກາດວ່າເປັນຜູ້ຫາຍສາບສູນ 10 ປີ ແລະ 20 ປີສຳລັບການປະກາດວ່າເສຍຊີວິດ.

ມາດຕາ 93 ຜູ້ມີສິດຮ້ອງຂໍໃຫ້ປະກາດວ່າບຸກຄົນໃດໜຶ່ງເປັນຜູ້ຫາຍສາບສູນ

ພີ່ນ້ອງ ຫຼື ເມຍ, ພໍ່, ແມ່, ຍາດພີ່ນ້ອງ, ການຈັດຕັ້ງ ຫຼື ຜູ້ມີສິດ ແລະ ພົນປະໂຫຍດກ່ຽວຂ້ອງ ມີສິດຮ້ອງຂໍຕໍ່ສານໃຫ້ປະກາດວ່າບຸກຄົນໃດໜຶ່ງເປັນຜູ້ຫາຍສາບສູນ.

ຈຸດປະສົງ	ເພື່ອກຳນົດຜູ້ທີ່ມີສິດສະເໜີ ໃຫ້ສານພິຈາລະນາປະກາດວ່າເປັນບຸກຄົນທີ່ຫາຍສາບສູນ ແລະ ໃນການຄຸ້ມຄອງຊັບສິນຂອງຜູ້ກ່ຽວ.
ຕົວຢ່າງ	ວັນທີ 1 ມັງກອນ 2021, **ກ** ເປັນນັກທຸລະກິດ ໄດ້ເດີນທາງໄປຕ່າງແຂວງ ໂດຍທາງເຮືອ, ໃນລະຫວ່າງການເດີນທາງນັ້ນ ເຮືອໄດ້ຕຳໃສ່ຫີນ ເຮັດໃຫ້ເຮືອແຕກ ແລະ ບໍ່ສາມາດຊອກຫາ **ກ** ຫຼື ຊາກສົບຂອງ **ກ** ໄດ້ ແລະ ບໍ່ຮູ້ຂ່າວກ່ຽວກັບ **ກ** ມາເລີຍ ຈົນຜ່ານໄລຍະເວລາ 9 ເດືອນ, ວັນທີ 30 ຕຸລາ 2021, ທະນາຄານ **ຂ** ທີ່ **ກ** ໄດ້ກູ້ຢືມເງິນມາເຮັດທຸລະກິດ ໄດ້ສະເໜີຕໍ່ສານເພື່ອໃຫ້ສານພິຈາລະນາ ປະກາດວ່າ **ກ** ເປັນຜູ້ຫາຍສາບສູນ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ປີ 2012, ມາດຕາ 337 (ໃໝ່) ທີ່ກຳນົດວ່າ ພີ່ນ້ອງ ຫຼື ເມຍ, ພໍ່, ແມ່, ຍາດພີ່ນ້ອງ ຫຼື ການ

	ຈັດຕັ້ງທີ່ກ່ຽວຂ້ອງ ມີສິດຮ້ອງຂໍຕໍ່ສານເພື່ອໃຫ້ພິຈາລະນາຕັດສິນປະກາດວ່າ ບຸກຄົນໃດໜຶ່ງເປັນຜູ້ຫາຍສາບສູນ...ແຕ່ມາດຕານີ້ ກຳນົດສະເພາະແຕ່ ຜົວ ຫຼື ເມຍ ຫຼື ຍາດໃກ້ຊິດ ຫຼື ການຈັດຕັ້ງ ບໍ່ໄດ້ກວມເອົາ ບຸກຄົນອື່ນໆ ທີ່ມີສ່ວນໄດ້ສ່ວນເສຍ ຫຼື ມີສິດຜົນປະໂຫຍດອັນຊອບທຳ ຕໍ່ກັບຜູ້ຫາຍສາບສູນ ເຊັ່ນ ເຈົ້າໜີ້, ສະນັ້ນໃນປະມວນກົດໝາຍແພ່ງ ຈຶ່ງຂະຫຍາຍຂອບເຂດໃຫ້ ກວມເອົາທັງ ບຸກຄົນອື່ນທີ່ມີສ່ວນກ່ຽວຂ້ອງໃຫ້ສາມາດຮ້ອງຂໍໄດ້ຈະເຮັດໃຫ້ຮັບປະກັນສິດ ຜົນປະໂຫຍດຂອງ ບຸກຄົນອື່ນທີ່ກ່ຽວຂ້ອງ. ອີກດ້ານໜຶ່ງ, ໃນກໍລະນີທີ່ບຸກຄົນໃດໜຶ່ງ "ບໍ່ຢູ່" ຫຼື "ຫາຍສາບສູນ" ມີຄວາມຈຳເປັນ ຕ້ອງຄຸ້ມຄອງຊັບສິນ ຫຼື ຊັບສົມບັດຂອງຜູ້ກ່ຽວ, ສະນັ້ນມາດຕານີ້ ນອກ ຈາກກຳນົດຜູ້ມີສິດຮ້ອງຂໍແລ້ວ ຍັງແນໃສ່ ເປົ້າໝາຍ ທີ່ເປັນເງື່ອນໄຂໃຫ້ສານ ພິຈາລະນາວ່າ ຜູ້ໃດທີ່ຈະເໝາະສົມທີ່ຈະໄດ້ດຳເນີນການຄຸ້ມຄອງຊັບສົມບັດ ນັ້ນ ແລະ ແຕ່ງຕັ້ງຜູ້ຄຸ້ມຄອງຊັບສິນຂອງຜູ້ກ່ຽວ ຊຶ່ງສອດຄ່ອງກັບຫຼັກການທີ່ ກຳນົດໄວ້ໃນກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງ ຂອງປະເທດອື່ນ	ມາດຕາ 61 ຂອງປະມວນກົດໝາຍແພ່ງ ແລະ ພານິດໄທ; ມາດຕາ 68 ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2015; ມາດຕາ 30 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ; ມາດຕາ 122 ຂອງປະມວນກົດໝາຍແພ່ງຝຮັ່ງ.
ມາດຕາອ້າງອີງ	ມາດຕາ 3, ຂໍ້ 3 ຂອງກົດໝາຍວ່າດ້ວຍທະບຽນຄອບຄົວ ປີ 2018; ມາດຕາ 337 (ໃໝ່) ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ປີ 2012.
ຂໍ້ມູນອື່ນ ຫຼື ປະເພນີສານ	**ສັງເກດວ່າ:** 1. ປະມວນກົດໝາຍແພ່ງຂອງປະເທດຕ່າງໆ ທີ່ອ້າງມາຂ້າງເທິງນັ້ນ ເຊັ່ນ ປະມວນກົດໝາຍແພ່ງຫວຽດນາມ, ໄທ, ຍີ່ປຸ່ນ ແລະ ຝຮັ່ງ ກຳນົດໃຫ້ "ບຸກຄົນໃດໜຶ່ງທີ່ກ່ຽວຂ້ອງ" ຫຼື "ຜູ້ທີ່ມີສ່ວນໄດ້ສ່ວນເສຍ" ຫຼື "ຜູ້ທີ່ມີ ຜົນປະໂຫຍດກ່ຽວຂ້ອງ" ເປັນຜູ້ທີ່ມີສິດຮ້ອງຂໍ. 2. ປະມວນກົດໝາຍແພ່ງໄທ ອະນຸຍາດໃຫ້ ໄອຍະການ ໃນນາມລັດ ສາມາດຮ້ອງຂໍໄດ້. 3. ປະມວນກົດໝາຍແພ່ງກຳປູເຈຍກຳນົດເພີ່ມເຕີ່ມໃຫ້ຜູ້ໄດ້ຮັບຜົນປະ ໂຫຍດຈາກການປະກັນໄພກໍສາມາດຮ້ອງຂໍໄດ້ ນອກຈາກຜູ້ອື່ນໆທີ່ມີ ຜົນປະໂຫຍດ.

ມາດຕາ 94 ການຈົດທະບຽນການຫາຍສາບສູນ

ເມື່ອມີຄຳຕັດສິນຂອງສານ ປະກາດວ່າບຸກຄົນໃດໜຶ່ງເປັນຜູ້ຫາຍສາບສູນແລ້ວ ຜູ້ຮ້ອງຂໍ ຕ້ອງ ໄປຈົດທະບຽນການຫາຍສາບສູນນັ້ນ ນຳຫ້ອງການຍຸຕິທຳຂັ້ນເມືອງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ວ່າດ້ວຍທະບຽນຄອບຄົວ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນວ່າການຈົດທະບຽນການຫາຍສາບສູນຖືກຮັບຮູ້ ແລະ ສາ ມາດເປີດເຜີຍຕໍ່ສາທາລະນະ ຢ່າງເປັນທາງການໄດ້ ພາຍຫຼັງສານໄດ້ປະກາດວ່າ ບຸກຄົນໃດໜຶ່ງເປັນຜູ້ຫາຍສາບສູນແລ້ວ.

ຕົວຢ່າງ	ອີງຕາມຕົວຢ່າງຂອງມາດຕາ 93, ກ່ອນທີ່ ທະນາຄານ **ຂ** ຈະຮຽກຮ້ອງ ຫຼື ທວງ ໃຫ້ ເມຍ ຂອງ **ກ** ໃຊ້ແທນໜີ້ສິນທີ່ **ກ** ໄດ້ກູ້ຢືມຈາກທະນາຄານນັ້ນ ຕ້ອງໄດ້ຈົດທະບຽນການຫາຍສາບສູນເສຍກ່ອນ ຈຶ່ງເຮັດໃຫ້ການຫາຍສາບສູນມີຜົນສັກສິດ.
ເຫດຜົນໃນການປັບປຸງ	ການຈົດທະບຽນຫາຍສາບສູນ ແມ່ນໜຶ່ງໃນວຽກງານທະບຽນຄອບຄົວຕາມກົດໝາຍວ່າດ້ວຍທະບຽນຄອບຄົວ ປີ 2018 ຊຶ່ງການຈົດທະບຽນການຫາຍສາບສູນ ເປັນເງື່ອນໄຂສຳຄັນໃນການປົກປ້ອງ ຊັບສິນ, ສິດ, ຜົນປະໂຫຍດ ແລະ ພັນທະຂອງຜູ້ຫາຍສາບສູນ ລວມທັງຜູ້ຮ້ອງຂໍໃຫ້ມີການຫາຍສາບສູນ. ອີງຕາມມາດຕາ 31 ຂອງກົດໝາຍວ່າດ້ວຍທະບຽນຄອບຄົວ ປີ 2018 ການຈົດທະບຽນການຫາຍສາບສູນ ໃຫ້ດຳເນີນຢູ່ຫ້ອງການຍຸຕິທຳຂັ້ນເມືອງ ບ່ອນຜູ້ຮ້ອງຂໍອາ ໄສຢູ່ ພາຍໃນເວລາ ສາມສິບວັນ ນັບແຕ່ວັນມີຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ ເປັນຕົ້ນໄປ ແລະ ຫ້ອງການຍຸຕິທຳຂັ້ນເມືອງທີ່ກ່ຽວຂ້ອງ ຕ້ອງແຈ້ງໄປຍັງຫ້ອງການພາຍໃນຂັ້ນເມືອງ ພາຍໃນເວລາ ຫ້າວັນ ລັດຖະການ. ສຳລັບການຫາຍສາບສູນຂອງຄົນຕ່າງດ້າວ, ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ໃຫ້ດຳເນີນຢູ່ພະແນກຍຸຕິທຳຂັ້ນແຂວງ ບ່ອນຜູ້ຮ້ອງຂໍອາໄສຢູ່ ພາຍໃນເວລາ ສາມສິບວັນ ນັບແຕ່ວັນມີຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ ເປັນຕົ້ນໄປ. ພາຍຫຼັງທີ່ໄດ້ຈົດທະບຽນການຫາຍສາບສູນແລ້ວ ພະແນກຍຸຕິທຳຂັ້ນແຂວງທີ່ກ່ຽວຂ້ອງ ຕ້ອງແຈ້ງໄປຍັງກອງບັນຊາການປ້ອງກັນຄວາມສະຫງົບຂັ້ນແຂວງ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 61 ຂອງປະມວນກົດໝາຍແພ່ງ ແລະ ພານິດໄທ; ມາດຕາ 68 ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2015; ມາດຕາ 30 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ; ມາດຕາ 122 ຂອງປະມວນກົດໝາຍແພ່ງຝຣັ່ງ.
ມາດຕາອ້າງອີງ	ມາດຕາ 337 (ໃໝ່) ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ປີ 2012; ມາດຕາ 3, 9, 11, 31, 42, 44 ແລະ 59 ຂອງກົດໝາຍວ່າດ້ວຍທະບຽນຄອບຄົວ ປີ 2018.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 95 ຜົນຂອງການປະກາດວ່າເປັນຜູ້ຫາຍສາບສູນ

ຄຳຕັດສິນຂອງສານ ທີ່ປະກາດວ່າບຸກຄົນໃດໜຶ່ງເປັນຜູ້ຫາຍສາບສູນ ມີຜົນ ດັ່ງນີ້:

1. ຕ້ອງໄດ້ແຕ່ງຕັ້ງຜູ້ຄຸ້ມຄອງຊັບສົມບັດຂອງຜູ້ກ່ຽວ;
2. ຜົວ ຫຼື ເມຍ ມີສິດ ຮ້ອງຂໍຢ່າຮ້າງ ແລະ ແບ່ງປັນສິນສົມສ້າງ;
3. ເຈົ້າໜີ້ຂອງຜູ້ຫາຍສາບສູນ ມີສິດຮ້ອງຂໍຕໍ່ສານ ເພື່ອທວງເອົາການໃຊ້ແທນໜີ້ສິນ;
4. ຜູ້ຄຸ້ມຄອງຊັບສົມບັດຂອງຜູ້ກ່ຽວ ມີສິດ ແລະ ພັນທະ ຕາມທີ່ກຳນົດໄວ້ໃນກົດໝາຍ ເຊັ່ນ ຊື້ຂາດຊັບເພື່ອເປັນຄ່າລ້ຽງດູລູກ ຫຼື ຜົນປະ�โຫຍດຂອງຜູ້ຫາຍສາບສູນ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ຜົນທາງດ້ານກົດໝາຍຕໍ່ບຸກຄົນທີ່ຖືກສານປະກາດວ່າຫາຍສາບສູນ.

ຕົວຢ່າງ	**ກ** ແລະ **ຂ** ແຕ່ງດອງມີລູກຮ່ວມກັນ 1 ຄົນ ມີທີ່ດິນໜຶ່ງຕອນ ແລະ ລົດເກັງ ສອງຄັນ, ຕໍ່ມາ **ກ** ໄດ້ໄປເຮັດວຽກຢູ່ຕ່າງປະເທດ ແລະ ຂາດການຕິດຕໍ່, ບໍ່ຮູ້ຂ່າວຄາວເປັນເວລາ 3 ປີ, ດັ່ງນັ້ນ **ຂ** ຈຶ່ງໄດ້ຮ້ອງຂໍຕໍ່ສານໃຫ້ປະກາດວ່າ **ກ** ເປັນຜູ້ຫາຍສາບສູນ. ສານໄດ້ປະກາດວ່າ **ກ** ເປັນຜູ້ຫາຍສາບສູນ ແລະ ໄດ້ແຕ່ງຕັ້ງ **ຂ** (ຜູ້ເປັນເມຍ) ເປັນຜູ້ຄຸ້ມຄອງຊັບສົມບັດຂອງ **ກ.** ພາຍຫຼັງຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດແລ້ວ **ຂ**ໄດ້ນຳເອົາຄຳຕັດສິນຂອງສານສະບັບດັ່ງກ່າວ ໄປຈົດທະບຽນການຫາຍສາບສູນທີ່ຫ້ອງການຍຸຕິທຳຂັ້ນເມືອງ. ຕໍ່ມາ **ຄ** ເຈົ້າໜີ້ຂອງ **ກ** ໄດ້ທວງໃຫ້ໃຊ້ແທນໜີ້ສິນ ທີ່ **ກ** ໄດ້ກູ້ຢືມເງິນຈາກ **ຄ. ຂ** ຜູ້ເປັນເມຍທີ່ຖືກແຕ່ງຕັ້ງເປັນຜູ້ຄຸ້ມຄອງຊັບສົມບັດຂອງ **ກ** ໄດ້ຂາຍລົດເກັງ ໜຶ່ງຄັນຂອງ **ກ** ເພື່ອໄປໃຊ້ແທນໜີ້ສິນໃຫ້ **ຄ.** ສ່ວນຊັບສົມບັດທີ່ຍັງເຫຼືອ **ຂ** ກໍສາມາດຊີ້ຂາດເພື່ອເປັນຄ່າລ້ຽງດູລູກ, ເຮັດບຸນກິນທານໃຫ້ **ກ** ແລະ ເປັນຄ່າໃຊ້ຈ່າຍໃນຄອບຄົວ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ປີ 2012 ມາດຕາ 340 ທີ່ກຳນົດໃຫ້ສານແຕ່ງຕັ້ງຜູ້ຄຸ້ມຄອງຊັບສົມບັດຂອງຜູ້ຖືກສານຕັດສິນປະກາດວ່າເປັນຜູ້ຫາຍສາບສູນ ແລະ ມາດຕາ 341 ກຳນົດຜົນສະທ້ອນທາງດ້ານກົດໝາຍໃນເມື່ອສານຕັດສິນປະກາດເປັນຜູ້ຫາຍສາບສູນ; ແລະ ກົດໝາຍວ່າດ້ວຍຄອບຄົວ ປີ 2008, ມາດຕາ 20 ຂໍ້ 5 ທີ່ກຳນົດໃຫ້ ຜົວ ຫຼື ເມຍຂອງບຸກຄົນທີ່ຖືກສານໄດ້ຕັດສິນປະກາດວ່າເປັນຜູ້ຫາຍສາບສູນ ມີສິດສະເໜີຂໍຢ່າຮ້າງ ຊຶ່ງມາດຕານີ້ ໄດ້ປັບປຸງ ໂດຍເອົາເນື້ອໃນເຫຼົ່ານັ້ນເຂົ້າກັນ ແລະ ຈັດລຽນຄືນໃໝ່ໃຫ້ສອດຄ່ອງ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 48 ຂອງປະມວນກົດໝາຍແພ່ງ ແລະ ພານິດ ໄທ; ມາດຕາ 64-69 ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2015; ມາດຕາ 25-32 ຂອງປະມວນກົດໝາຍແພ່ງ ຢີ່ປຸ່ນ; ມາດຕາ 37-44 ຂອງປະມວນກົດໝາຍແພ່ງ ກຳປູເຈຍ.
ມາດຕາອ້າງອີງ	ມາດຕາ 340 ແລະ 341 ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ປີ 2012; ມາດຕາ 79 ແລະ 84 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ/ຂໍ້ສັງເກດ	ສືບຕໍ່ຄົ້ນຄວ້າ.

ມາດຕາ 96 ການລົບລ້າງການປະກາດວ່າເປັນຜູ້ຫາຍສາບສູນ

ເມື່ອບຸກຄົນທີ່ສານໄດ້ຕັດສິນປະກາດວ່າເປັນຜູ້ຫາຍສາບສູນ ຫາກກັບຄືນມາ ຫຼື ມີຫຼັກຖານທີ່ເຊື່ອຖືໄດ້ວ່າຜູ້ກ່ຽວຍັງມີຊີວິດຢູ່, ຜູ້ກ່ຽວ, ຜູ້ມີສິດ ຫຼື ຜູ້ມີຜົນປະໂຫຍດກ່ຽວຂ້ອງ ມີສິດຮ້ອງຂໍໃຫ້ສານພິຈາລະ ນາລົບລ້າງຄຳຕັດສິນທີ່ໄດ້ປະກາດວ່າຜູ້ກ່ຽວເປັນຜູ້ຫາຍສາບສູນ.

ເມື່ອສານໄດ້ລົບລ້າງຄຳຕັດສິນດັ່ງກ່າວແລ້ວ ສິດ ແລະ ພັນທະຂອງຜູ້ກ່ຽວຕາມກົດໝາຍ ຈະຖືກຟື້ນຟູຄືນ ເວັ້ນເສຍແຕ່ ຄຳຕັດສິນຂອງສານ ກ່ຽວກັບການຢ່າຮ້າງ ຫຼື ຊັບສົມບັດ ທີ່ໄດ້ຊີ້ຂາດຢ່າງຖືກຕ້ອງຕາມກົດໝາຍແລ້ວ.

ຈຸດປະສົງ	ເພື່ອກຳນົດຜູ້ມີສິດຂໍໃຫ້ສານພິຈາລະນາລົບລ້າງການປະກາດເປັນຜູ້ຫາຍສາບສູນ ພາຍຫຼັງທີ່ກັບຄືນມາ ຫຼື ມີຫຼັກຖານທີ່ເຊື່ອຖືໄດ້ວ່າຜູ້ກ່ຽວຍັງມີຊີວິດຢູ່. ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ທີ່ຖືກປະກາດວ່າເປັນຜູ້ຫາຍສາບສູນສາມາດຟື້ນຟູ.

ຕົວຢ່າງ	ອີງຕາມຕົວຢ່າງມາດຕາ 95, ຕໍ່ມາ **ກ** ໄດ້ກັບຄືນ ຈຶ່ງຮູ້ວ່າຖືກສານຕັດສິນ ເປັນຜູ້ຫາຍສາບສູນ ຈຶ່ງຂຽນຄຳຮ້ອງຕໍ່ສານໃຫ້ສານລົບລ້າງຄຳຕັດສິນທີ່ໄດ້ປະກາດວ່າຕົນເປັນຜູ້ຫາຍສາບສູນ. ໃນກໍລະນີນີ້, ຊັບສິນຂອງ **ກ** ທີ່ຍັງເຫຼືອຢູ່ນຳ **ຂ** ທີ່ເປັນຜູ້ຄຸ້ມຄອງນັ້ນ ຕ້ອງໄດ້ສົ່ງຄືນໃຫ້ຜູ້ກ່ຽວ, ເວັ້ນເສຍແຕ່ ລົດເກັງທີ່ **ຂ** ໄດ້ຊື້ຂາດ ເພື່ອໃຊ້ໜີ້ສິນແທນໜີ້ສິນຂອງ **ກ;** ແລະ **ຂ** ຜູ້ເປັນເມຍ ໄດ້ແຕ່ງດອງກັບຜູ້ອື່ນຢ່າງຖືກຕ້ອງຕາມກົດໝາຍແລ້ວ, **ກ** ຈະບໍ່ໄດ້ **ຂ** ເປັນເມຍຄືນ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ປີ 2012, ມາດຕາ 342 ທີ່ກຳນົດຫຼັກການໃນການຂໍລົບລ້າງຄຳຕັດສິນຂອງສານທີ່ປະກາດວ່າເປັນຜູ້ຫາຍສາບສູນ ແລະ ກົດໝາຍວ່າດ້ວຍທະບຽນຄອບຄົວ ປີ 2018 ມາດຕາ 32 ທີ່ກຳນົດກ່ຽວກັບການປ່ຽນແປງ, ການລົບລ້າງ ແລະ ການຄັດຄ້ານການຈົດທະບຽນຄອບຄົວ ຊຶ່ງປັບປຸງໃນສ່ວນທີ່ເປັນຫຼັກການທາງດ້ານແພ່ງເທົ່ານັ້ນ, ສ່ວນຫຼັກການ ແລະ ວິທີການໃນການດຳເນີນການຮ້ອງຂໍລົບລ້າງ ແລະ ການແຈ້ງລົບລ້າງການຈົດທະບຽນຫາຍສາບສູນ ຍັງຮັກສາໄວ້ໃນກົດໝາຍກ່ຽວຂ້ອງຄືເກົ່າ. ຄຳວ່າ “ຜູ້ມີສິດ” ໃນມາດຕາ 93 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 63 ຂອງປະມວນກົດໝາຍແພ່ງ ແລະ ພານິດ ໄທ; ມາດຕາ 70 ຂອງປະມວນກົດໝາຍແພ່ງ ຫວຽດນາມ ປີ 2015; ມາດຕາ 25-32 ຂອງປະມວນກົດໝາຍແພ່ງ ຍີ່ປຸ່ນ; ມາດຕາ 31 ຂອງປະມວນກົດໝາຍແພ່ງ ຍີ່ປຸ່ນ; ມາດຕາ 37-44 ຂອງປະມວນກົດໝາຍແພ່ງ ກຳປູເຈຍ.
ມາດຕາອ້າງອີງ	ມາດຕາ 342 ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ປີ 2012.
ຂໍ້ມູນອື່ນ/ຂໍ້ສັງເກດ	ອີງຕາມກົດໝາຍວ່າດ້ວຍທະບຽນຄອບຄົວ ປີ 2018 ມາດຕາ 32 ທີ່ກຳນົດກ່ຽວກັບການປ່ຽນແປງ, ການລົບລ້າງ ແລະ ການຄັດຄ້ານ ການຈົດທະບຽນຄອບຄົວ ຊຶ່ງກຳນົດວ່າ: (1). ເມື່ອ “ບຸກຄົນໃດ” ຫາກເຫັນວ່າການຈົດທະບຽນຄອບຄົວຂອງຕົນ ບໍ່ຖືກຕ້ອງແລ້ວ ຜູ້ກ່ຽວມີສິດຮ້ອງຂໍຕໍ່ເຈົ້າໜ້າທີ່ທະບຽນຄອບຄົວບ່ອນຕົນອາໄສຢູ່ ເພື່ອໃຫ້ປ່ຽນແປງ ຫຼື ລົບລ້າງ ໃນກໍລະນີທີ່ເຈົ້າໜ້າທີ່ທະບຽນຄອບຄົວ ຫາກບໍ່ພິຈາລະນາຜູ້ກ່ຽວກໍມີສິດຮ້ອງຂໍຕໍ່ສານ ເພື່ອໃຫ້ປ່ຽນແປງ ຫຼື ລົບລ້າງການຈົດທະບຽນດັ່ງກ່າວ. **ໃນຈຸດນີ້ເຫັນວ່າຕ້ອງໄດ້ມີຄຳຕັດສິນຂອງສານ ລົບລ້າງຄຳຕັດສິນຂອງສານທີ່ປະກາດວ່າຫາຍສາບສູນເສຍກ່ອນ ຈຶ່ງເປັນເງື່ອນໄຂໃຫ້ສະເໜີລົບລ້າງການຈົດທະບຽນຫາຍສາບສູນ ໄດ້.** (2). ສຳລັບການຈົດທະບຽນຄອບຄົວ ທີ່ແຕະຕ້ອງເຖິງສິດ ແລະ ຜົນປະໂຫຍດ ຂອງບຸກຄົນໃດໜຶ່ງ ບຸກຄົນນັ້ນ ກໍມີສິດຂໍຄັດຄ້ານການຈົດທະບຽນດັ່ງກ່າວ ຊຶ່ງນີ້ກໍສອດຄ່ອງກັບມາດຕານີ້ ຂອງປະມວນກົດໝາຍແພ່ງແລ້ວ. (3). ເຈົ້າໜ້າທີ່ທະບຽນຄອບຄົວ ທີ່ເຫັນວ່າການຈົດທະບຽນຄອບຄົວຂອງຕົນ ບໍ່ຖືກຕ້ອງ ກໍມີສິດປ່ຽນແປງ ຫຼື ລົບລ້າງໂດຍໜ້າທີ່ໄດ້. **ໃນຈຸດນີ້ຕ້ອງເອົາໃຈໃສ່ໃນກໍລະນີທີ່ມີຄຳຕັດສິນຂອງສານ ແລະ ມີແຕ່ສານເທົ່ານັ້ນທີ່ສາມາດປ່ຽນແປງຄຳຕັດສິນຂອງສານໄດ້ ເຖິງແມ່ນວ່າ ເຈົ້າໜ້າທີ່**

	ທະບຽນຄອບຄົວຈະເຫັນວ່າການຈົດທະບຽນຫາຍສາບສູນບໍ່ຖືກຕ້ອງກໍຕາມ, ເຈົ້າໜ້າທີ່ບໍ່ສາມາດລົບລ້າງທະບຽນໄດ້ ຍ້ອນວ່າຂະບວນການໃນການປະກາດວ່າບຸກຄົນໃດໜຶ່ງເປັນຜູ້ຫາຍສາບສູນ ຕ້ອງໄດ້ດຳເນີນຕາມຂະບວນການຍຸຕິທຳ ຊຶ່ງຕ້ອງມີການພິສູດຕາມເງື່ອນໄຂທີ່ກຳນົດໄວ້ໃນປະມວນກົດໝາຍແພ່ງ ແລະ ດຳເນີນໃຫ້ຖືກຕ້ອງຕາມກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ. (4). ການປ່ຽນແປງ ຫຼື ລົບລ້າງການຈົດທະບຽນຄອບຄົວ ຕ້ອງພິຈາລະນາພາຍໃນເວລາ ສິບຫ້າວັນ ນັບແຕ່ວັນໄດ້ຮັບຄຳຮ້ອງ ເປັນຕົ້ນໄປ.

ມາດຕາ 97 ການເສຍຊີວິດຕາມຄຳຕັດສິນຂອງສານ

ການເສຍຊີວິດຕາມຄຳຕັດສິນຂອງສານ ແມ່ນການທີ່ບຸກຄົນໃດໜຶ່ງໄດ້ຫາຍໄປຈາກຄອບຄົວ ຫຼື ບ່ອນ ຢູ່ຂອງຕົນ ໂດຍບໍ່ຮູ້ຂ່າວຄາວເປັນເວລາ ສາມປີ ຂຶ້ນໄປ ຫຼື ໄດ້ຫາຍໄປໃນສົງຄາມ, ໄພພິບັດ ຫຼື ອຸບັດຕິເຫດ ເປັນເວລາ ສອງປີ ຂຶ້ນໄປ, ບຸກຄົນນັ້ນ ຈະຖືວ່າເປັນຜູ້ເສຍຊີວິດໄດ້ ກໍຕໍ່ເມື່ອມີຄຳຕັດສິນຂອງສານ.

ການນັບກຳນົດເວລາການເສຍຊີວິດ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 92 ວັກ 2 ແລະ 3 ຂອງປະມວນກົດໝາຍສະບັບນີ້.

ຈຸດປະສົງ	ເພື່ອກຳນົດຄວາມໝາຍຂອງການເສຍຊີວິດຕາມຄຳຕັດສິນຂອງສານ ແລະ ເງື່ອນໄຂຂອງການເສຍຊີວິດຕາມຄຳຕັດສິນຂອງສານເພື່ອເປັນພື້ນຖານໃຫ້ສານພິຈາລະນາຕັດສິນ.
ຕົວຢ່າງ	1. **ກໍລະນີປົກກະຕິ**: ວັນທີ 1 ມັງກອນ 2019, **ກ** ບອກກັບຄອບຄົວວ່າ ຈະໄປເຮັດວຽກຢູ່ຕ່າງແຂວງ ແລະ ເຂົ້າເຮັດວຽກ ຢູ່ບໍລິສັດແຫ່ງໜຶ່ງ ໃນແຂວງນັ້ນ. ນັບແຕ່ວັນທີ 7 ມັງກອນ 2019 ເມຍຂອງ **ກ** ບໍ່ໄດ້ຮັບຂ່າວຈາກ **ກ** ອີກເລີຍ **ຂ** ເມຍຂອງ **ກ** ຈຶ່ງ ໄດ້ຊອກຫາ ແລະ ຖາມຍາດຕິພີ່ນ້ອງ ແລະ ໃຫ້ບໍລິສັດ ຊ່ວຍປະກາດຫາ ຈົນຮອດວັນທີ 10 ມັງກອນ 2022, ເມຍ ຂອງ **ກ** ໄດ້ສະເໜີໃຫ້ອົງການປົກຄອງບ້ານບ່ອນທີ່ **ກ** ອາໄສຢູ່ບ່ອນສຸດທ້າຍ ອອກໜັງສືຢັ້ງຢືນ ໃຫ້ວ່າ **ກ** ບໍ່ໄດ້ຢູ່ນັບແຕ່ ວັນທີ 7 ມັງກອນ 2019 ແລະ ບໍລິສັດ ກໍໄດ້ຢັ້ງຢືນໃຫ້ ເຊັ່ນດຽວກັນ, **ຂ** ຈຶ່ງ ຍື່ນຄຳຮ້ອງຂໍຕໍ່ສານໃຫ້ພິຈາລະນາໃຫ້ປະກາດວ່າ **ກ** ເປັນຜູ້ເສຍຊີວິດ. 2. **ກໍລະນີໄພພິບັດ: ກ** ແລະ **ຂ** ເຮັດສັນຍາກູ້ຢືມເງິນ ຈຳນວນ 200, 000, 000 ກີບ ໃນວັນທີ 1 ມັງກອນ 2020 ເພື່ອມາດຳເນີນທຸລະກິດ ຂອງ **ກ** ຊຶ່ງ ໄດ້ຕົກລົງກັນວ່າ **ກ** ຕ້ອງສົ່ງເງິນຄືນ ພາຍໃນວັນທີ 5 ມັງກອນ 2021. ວັນທີ 2 ມັງກອນ 2020, **ກ** ໄດ້ເດີນທາງໄປເຮັດວຽກຢູ່ຕ່າງແຂວງ, ໃນລະຫວ່າງເດີນທາງ ໄດ້ມີພາຍຸຝົນລົມແຮງ ຢູ່ແຂວງ **ຄ** ແລະ ຫຼັງຈາກນັ້ນກໍບໍ່ມີໃຜຮູ້ວ່າ **ກ** ຢູ່ໃສ ຫຼື ໄດ້ຂ່າວຂອງ **ກ** ອີກເລີຍ ແລະ ຫ້ອງການປ້ອງກັນຄວາມສະຫງົບເມືອງ **ງ** ແຂວງ **ຄ** ໄດ້ ອອກໜັງສືຢັ້ງຢືນການຜົນຂອງການຕິດຕາມຊອກຫາ **ກ** ໃຫ້ **ຂ** ເປັນ ຫຼັກຖານ. ວັນທີ 2 ກຸມພາ 2022, **ຂ** ຈຶ່ງຕັດສິນໃຈຮ້ອງຂໍຕໍ່ສານ ໃຫ້ສານພິຈາລະນາຕັດສິນປະກາດວ່າ **ກ** ເປັນຜູ້ເສຍຊີວິດ ແລະ ສະເໜີໃຫ້ສານພິຈາລະນາແກ້ໄຂໜີ້ສິນຂອງ **ກ.**

	3. ກໍລະນີອຸບປະຕິເຫດ: ໃນວັນທີ 1 ມັງກອນ 2022 **ກ** ເດີນທາງໄປ ຕ່າງປະເທດໂດຍສາຍການບິນໜຶ່ງ ແລະ ເກີດອຸບປະຕິເຫດ ເຮືອບິນຕົກ ພາໃຫ້ຜູ້ໂດຍສານ ຈຳນວນໜຶ່ງເສຍຊີວິດ ແຕ່ຍັງຊອກຊາກສົບ ຂອງ **ກ** ບໍ່ເຫັນ. **ຂ** ເມຍ ຂອງ **ກ** ໄດ້ສອບຖາມນຳຄະນະກຳມະການຮັບຜິດຊອບ ອຸບປະຕິເຫດທີ່ຢູ່ຕ່າງປະເທດ ແລະ ໄດ້ລົງໜັງສືພິມປະກາດຫາ **ກ** ແຕ່ ຜ່ານໄປ 2 ປີ ນັບແຕ່ວັນທີ່ເຮືອບິນຕົກ ຍັງຊອກຊາກສົບບໍ່ເຫັນ ແລະ ບໍ່ຮູ້ໄດ້ວ່າ **ກ** ຍັງມີຊີວິດ ຫຼື ບໍ່. ວັນທີ 1 ມັງກອນ 2024. ເມຍ ຂອງ **ກ** ຈຶ່ງຍື່ນຄຳຮ້ອງຂໍສະເໜີໃຫ້ສານພິຈາລະນາຕັດສິນວ່າ **ກ** ເປັນຜູ້ເສຍ ຊີວິດ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ຫຼັກການກ່ຽວກັບ "ການເສຍຊີວິດຕາມຄຳຕັດສິນຂອງ ສານ" ຂອງບຸກຄົນໃດໜຶ່ງ ທີ່ໄດ້ກຳນົດໄວ້ໃນ ສອງ ກົດໝາຍ ຄື: 1. ກົດໝາຍວ່າດ້ວຍທະບຽນຄອບຄົວ ປີ 2018, ມາດຕາ 3, ຂໍ້ 6 ຂອງ ກຳນົດວ່າ "**ການເສຍຊີວິດຕາມຄຳຕັດສິນຂອງສານ** ໝາຍເຖິງ ການທີ່ບຸກຄົນໃດໜຶ່ງໄດ້ຫາຍໄປຈາກຄອບຄົວ ໂດຍບໍ່ຮູ້ບ່ອນຢູ່ ແລະ ບໍ່ ຮູ້ຂ່າວຄາວ ເປັນເວລາ ສາມປີ ໂດຍມີຄຳຕັດສິນຂອງສານ". 2. ກົດໝາຍວ່າດວ້ຍການດຳເນີນຄະດີແພ່ງ ປີ 2012, ວັກສອງ ຂອງ ມາດຕາ 337 (ໃໝ່) ທີ່ກຳນົດວ່າ "ສ່ວນຄຳຮ້ອງຂໍໃຫ້ປະກາດວ່າບຸກຄົນ ໃດໜຶ່ງ ເປັນຜູ້ເສຍຊີວິດ ຕ້ອງບົ່ງບອກຫຼັກຖານທີ່ຢັ້ງຢືນວ່າບຸກຄົນດັ່ງ ກ່າວໄດ້ຫາຍໄປໃນສິ່ງຄາມ, ໃນເວລາມີໄພພິບັດພາຍຫຼັງສິ້ນສຸດສິ່ງຄາມ ຫຼື ໄພພິບັດ ໄດ້ພະຍາຍາມ ຊອກຫາ, ຊອກຄົ້ນ ແຕ່ບໍ່ພົບເຫັນ ຊາກສົບ ຫຼື ຮ່ອງຮອຍ ຊຶ່ງໄດ້ພະຍາຍາມຊອກຫາພາຍໃນກຳນົດເວລາສອງປີ ແຕ່ບໍ່ພົບໂດຍມີການ ຢັ້ງຢືນຂອງພະຍານ, ຜູ້ຊ່ຽວຊານ ຫຼື ພະນັກງານ ວິຊາການທາງການແພດ". ປັດຈຸບັນຍັດເຫຼົ່ານັ້ນ ຍັງບໍ່ໄດ້ກຳນົດຊ່ວງເວລາທີ່ແນ່ນອນໃຫ້ແກ່ການນັບອາຍຸ ຄວາມຂອງການເສຍຊີວິດຕາມຄຳຕັດສິນຂອງສານ ສະນັ້ນມາດຕານີ້ ຈຶ່ງມີການ ປັບປຸງ ເພີ່ມຫຼັກການໃນການຄິດໄລ່ອາຍຸຄວາມໃສ່ໃນວັກສອງ ຂອງມາດຕາ ນີ້ ຊຶ່ງໄດ້ນຳໃຊ້ຫຼັກການດຽວກັນໃນການຄິດໄລ່ອາຍຸຄວາມຂອງການຫາຍສາບ ສູນ ຕາມທີ່ກຳໄວ້ໃນມາດຕາ 92 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງ ຂອງປະເທດອື່ນ	ມາດຕາ 30, 31 ຂອງປະມວນກົດໝາຍແພ່ງ ຍີ່ປຸ່ນ; ມາດຕາ 71 ຂອງປະມວນກົດໝາຍແພ່ງ ຫວຽດນາມ ປີ 2015.
ມາດຕາອ້າງອີງ	ມາດຕາ 92 ຂອງປະມວນກົດໝາຍແພ່ງ; ມາດຕາ 337 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ປີ 2012 ກ່ຽວກັບ ຜູ້ມີສິດຮ້ອງຂໍ.
ຂໍ້ມູນອື່ນ/ຂໍ້ສັງເກດ	ສືບຕໍ່ຄົ້ນຄວ້າ.

ມາດຕາ 98 ຜູ້ມີສິດຮ້ອງຂໍໃຫ້ປະກາດວ່າບຸກຄົນໃດໜຶ່ງເປັນຜູ້ເສຍຊີວິດ

ຜູ້ມີສິດຮ້ອງຂໍໃຫ້ປະກາດວ່າບຸກຄົນໃດໜຶ່ງເປັນຜູ້ເສຍຊີວິດ ແມ່ນບຸກຄົນ ແລະ ການຈັດຕັ້ງ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 93 ຂອງປະມວນກົດໝາຍສະບັບນີ້.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ວ່າຜູ້ທີ່ມີສິດສະເໜີ ໃຫ້ສານພິຈາລະນາປະກາດວ່າເປັນບຸກຄົນ ທີ່ເສຍຊີວິດຕາມຄຳຕັດສິນຂອງສານ ແລະ ໃນການຄຸ້ມຄອງຊັບສິນຂອງຜູ້ ກ່ຽວ.

ຕົວຢ່າງ	ເບິ່ງຕົວຢ່າງຕາມມາດຕາ 93 ຂອງບົດອະທິບາຍປະມວນກົດໝາຍແພ່ງ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ປີ 2012, ມາດຕາ 337 (ໃໝ່) ທີ່ກຳນົດວ່າ ຜົວ ຫຼື ເມຍ, ພໍ່, ແມ່, ຍາດພີ່ນ້ອງ ຫຼື ການຈັດຕັ້ງທີ່ກ່ຽວຂ້ອງ ມີສິດຮ້ອງຂໍຕໍ່ສານເພື່ອໃຫ້ພິຈາລະນາຕັດສິນປະກາດວ່າ ບຸກຄົນໃດໜຶ່ງເປັນຜູ້ຫາຍສາບສູນ...ແຕ່ມາດຕານີ້ ກຳນົດສະເພາະແຕ່ ຜົວ ຫຼື ເມຍ ຫຼື ຍາດໃກ້ຊິດ ຫຼື ການຈັດຕັ້ງ ແຕ່ບໍ່ໄດ້ກວມເອົາ ບຸກຄົນອື່ນໆ ທີ່ມີສ່ວນ ໄດ້ສ່ວນເສຍ ຫຼື ມີສິດຜົນປະໂຫຍດອັນຊອບທຳຕໍ່ກັບຜູ້ຫາຍສາບສູນ ເຊັ່ນ ເຈົ້າໜີ້, ສະນັ້ນໃນການຮ່າງປະມວນກົດໝາຍແພ່ງ ຈຶ່ງຂະຫຍາຍຂອບເຂດໃຫ້ກວມເອົາທັງບຸກຄົນອື່ນທີ່ມີສ່ວນກ່ຽວຂ້ອງໃຫ້ສາມາດຮ້ອງຂໍໄດ້ ຈະເຮັດໃຫ້ຮັບປະກັນສິດຜົນປະໂຫຍດຂອງບຸກຄົນອື່ນທີ່ກ່ຽວຂ້ອງ ເປັນເຫດຜົນດຽວກັນ ໃນການປັບປຸງມາດຕາ 93 ຂອງປະມວນກົດໝາຍແພ່ງ. ອີກດ້ານໜຶ່ງ, ໃນກໍລະນີທີ່ບຸກຄົນໃດໜຶ່ງ ຖືກສານຕັດສິນປະກາດວ່າ "ເປັນ ຜູ້ເສຍຊີວິດຕາມຄຳຕັດສິນຂອງສານ" ມີຄວາມຈຳເປັນ ຕ້ອງຄຸ້ມຄອງຊັບສິນ ຫຼື ຊັບສົມບັດຂອງຜູ້ກ່ຽວ, ສະນັ້ນມາດຕານີ້ ນອກຈາກກຳນົດຜູ້ມີສິດຮ້ອງຂໍ ແລ້ວ ຍັງແນໃສ່ ເປົ້າໝາຍ ທີ່ເປັນເງື່ອນໄຂໃຫ້ສານພິຈາລະນາວ່າ ຜູ້ໃດທີ່ຈະ ເໝາະສົມທີ່ຈະໄດ້ດຳເນີນການຄຸ້ມຄອງຊັບສົມບັດນັ້ນ ແລະ ແຕ່ງຕັ້ງຜູ້ຄຸ້ມຄອງ ຊັບສິນຂອງຜູ້ກ່ຽວ ຊຶ່ງສອດຄ່ອງກັບຫຼັກການທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍ ການດຳ ເນີນຄະດີແພ່ງ.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງ ຂອງປະເທດອື່ນ	ມາດຕາ 30 ຂອງປະມວນກົດໝາຍແພ່ງ ຢີ່ປຸ່ນ; ມາດຕາ 71 ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2015.
ມາດຕາອ້າງອີງ	ມາດຕາ 93, 99 ແລະ 100 ຂອງປະມວນກົດໝາຍແພ່ງ; ມາດຕາ 337 ແລະ 441 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ປີ 2012.
ຂໍ້ມູນອື່ນ	ສືບຕໍ່ຄົ້ນຄວ້າ

ມາດຕາ 99 ການຈົດທະບຽນການເສຍຊີວິດຕາມຄຳຕັດສິນຂອງສານ

ເມື່ອມີຄຳຕັດສິນຂອງສານປະກາດວ່າເປັນຜູ້ເສຍຊີວິດແລ້ວ ຜູ້ຮ້ອງຂໍ ຕ້ອງໄປຈົດທະບຽນການ ເສຍຊີວິດ ນຳຫ້ອງການພາຍໃນຂັ້ນເມືອງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍທະບຽນຄອບຄົວ.

ຈຸດປະສົງ	ເພື່ອກຳນົດໃຫ້ການຈົດທະບຽນການເສຍຊີວິດຕາມການຕັດສິນຂອງສານ ຖືກ ຮັບຮູ້ ແລະ ສາມາດເປີດເຜີຍຕໍ່ສາທາລະນະ ຢ່າງເປັນທາງການໄດ້ ພາຍຫຼັງສານ ໄດ້ປະກາດວ່າບຸກຄົນໃດໜຶ່ງເປັນຜູ້ເສຍຊີວິດຕາມຄຳຕັດສິນຂອງສານແລ້ວ.
ຕົວຢ່າງ	ວັນທີ 1 ມັງກອນ 2019, **ກ** ບອກກັບຄອບຄົວວ່າຈະໄປເຮັດວຽກຢູ່ຕ່າງ ແຂວງ ແລະ ເຂົ້າເຮັດວຽກຢູ່ ຢູ່ບໍລິສັດແຫ່ງໜຶ່ງ ໃນແຂວງນັ້ນ. ນັບແຕ່ວັນທີ 7 ມັງກອນ 2019 ເມຍຂອງ **ກ** ບໍ່ໄດ້ຮັບຂ່າວ ຈາກ **ກ** ອີກເລີຍ **ຂ** ເມຍຂອງ **ກ** ຈຶ່ງ ໄດ້ຊອກຫາ ແລະ ຖາມຍາດຕີພີ່ນ້ອງ ແລະ ໃຫ້ບໍລິສັດ ຊ່ວຍປະກາດ ຫາ ຈົນຮອດວັນທີ 10 ມັງກອນ 2022, ເມຍ ຂອງ **ກ** ໄດ້ສະເໜີໃຫ້ອົງການ ປົກຄອງບ້ານບ່ອນທີ່ **ກ** ອາໄສຢູ່ບ່ອນສຸດທ້າຍ ອອກໜັງສືຢັ້ງຢືນໃຫ້ວ່າ **ກ** ບໍ່ ໄດ້ຢູ່ນັບແຕ່ ວັນທີ 7 ມັງກອນ 2019 ແລະ ບໍລິສັດ ກໍໄດ້

	ຢັ້ງຢືນໃຫ້ ເຊັ່ນດຽວກັນ, **ຂ** ຈົ່ງຍື່ນຄຳຮ້ອງຂໍຕໍ່ສານໃຫ້ພິຈາລະນາໃຫ້ປະກາດ ວ່າ **ກ** ເປັນຜູ້ເສຍຊີວິດ. ເມື່ອ **ກ** ຖືກປະກາດວ່າເສຍຊີວິດຕາມຄຳຕັດສິນຂອງ ສານແລ້ວ, **ຂ** ຕ້ອງໄປແຈ້ງຈົດທະບຽນການເສຍຊີວິດຕາມຄຳຕັດສິນຂອງສານ ກັບຫ້ອງການພາຍໃນຂອງເມືອງ ຈົ່ງເຮັດໃຫ້ການເສຍຊີວິດຕາມຄຳຕັດສິນຂອງ ສານມີຜົນສັກສິດ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ປີ 2012 ມາດຕາ 341 ທີ່ກຳນົດໃຫ້ສານແຕ່ງຕັ້ງຜູ້ຄຸ້ມຄອງຊັບສົມບັດຂອງຜູ້ຖືກສານ ຕັດສິນປະກາດວ່າເປັນຜູ້ຫາຍສາບສູນ ແລະ ມາດຕາ 341 ກຳນົດຜົນສະທ້ອນ ທາງດ້ານກົດໝາຍໃນເມື່ອສານຕັດສິນປະກາດເປັນຜູ້ຫາຍສາບສູນ; ແລະ ກົດ ໝາຍວ່າດ້ວຍຄອບຄົວ ປີ 2008, ມາດຕາ 20 ຂໍ້ 5 ທີ່ກຳນົດໃຫ້ ຜົວຫຼື ເມຍ ຂອງບຸກຄົນທີ່ຖືກສານໄດ້ຕັດສິນປະກາດວ່າເປັນຜູ້ຫາຍສາບສູນ ມີສິດສະເໜີ ຂໍຢ່າຮ້າງ ຊຶ່ງມາດຕານີ້ ໄດ້ປັບປຸງ ໂດຍເອົາເນື້ອໃນເຫຼົ່ານັ້ນເຂົ້າກັນ ແລະ ຈັດ ລຽງຄືນໃໝ່ໃຫ້ສອດຄ່ອງ. ມາດຕານີ້ປັບປຸງມາຈາກ ມາດຕາ 23 ຂອງກົດໝາຍວ່າດ້ວຍທະບຽນຄອບຄົວ ປີ 2008 ແລະ ກົດໝາຍວ່າດ້ວຍທະບຽນຄອບຄົວ ປີ 2018 ເພື່ອໃຫ້ ສອດຄ່ອງກັນ ໂດຍເພີ່ມຂະແໜງການຈົດທະບຽນ-ຫ້ອງການພາຍໃນເມືອງ ໃສ່ ເພື່ອໃຫ້ມີຄວາມຈະແຈ້ງຍິ່ງຂຶ້ນ. ການຈົດທະບຽນການເສຍຊີວິດຕາມຄຳຕັດສິນຂອງສານ ແມ່ນໜຶ່ງໃນວຽກ ງານທະບຽນຄອບຄົວ ຕາມກົດໝາຍວ່າດ້ວຍທະບຽນຄອບຄົວ ປີ 2018 ຊຶ່ງ ການຈົດທະບຽນການເສຍຊີວິດຕາມຄຳຕັດສິນຂອງສານ ເປັນພື້ນຖານໃຫ້ແກ່ ການສືບທອດມູນມໍຣະດົກ ແລະ ການປົກປ້ອງ ຊັບສິນ, ສິດ, ຜົນປະໂຫຍດ ແລະ ພັນທະຂອງຜູ້ເສຍຊີວິດຕາມຄຳຕັດສິນຂອງສານ. ອີງຕາມມາດຕາ 21 ຂອງກົດໝາຍວ່າດ້ວຍທະບຽນຄອບຄົວ ປີ 2018 ການ ຈົດທະບຽນການເສຍຊີວິດຕາມຄຳຕັດສິນຂອງສານ ໃຫ້ດຳເນີນຢູ່ຫ້ອງການ ພາຍໃນຂັ້ນເມືອງ ບ່ອນຜູ້ຮ້ອງຂໍອາໄສຢູ່ ຫຼື ບ່ອນທີ່ພັກຊົ່ວຄາວ ພາຍໃນເວລາ ຫ້າ ວັນ ລັດຖະການ ນັບແຕ່ວັນມີຄຳຕັດສິນຂອງສານທີ່ຮັບຊາບຄຳຕັດສິນຂອງ ສານເປັນ ຕົ້ນໄປ.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງ ຂອງປະເທດອື່ນ	ມາດຕາ 30 ຂອງປະມວນກົດໝາຍແພ່ງ ຍີ່ປຸ່ນ; ມາດຕາ 71 ຂອງປະມວນກົດໝາຍແພ່ງ ຫວຽດນາມ ປີ 2015.
ມາດຕາອ້າງອີງ	ມາດຕາ 341 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ປີ 2012 ກ່ຽວກັບ ຜົນຂອງການປະກາດວ່າເປັນຜູ້ເສຍຊີວິດຕາມຄຳຕັດສິນຂອງສານ.
ຂໍ້ມູນອື່ນ	ສືບຕໍ່ຄົ້ນຄວ້າ.

ມາດຕາ 100 ຜົນຂອງການປະກາດວ່າເປັນຜູ້ເສຍຊີວິດຕາມຄຳຕັດສິນຂອງສານ

ຄຳຕັດສິນຂອງສານ ທີ່ປະກາດວ່າບຸກຄົນໃດໜຶ່ງເປັນຜູ້ເສຍຊີວິດ ມີຜົນ ດັ່ງນີ້:

1. ສາຍ ຜົວເມຍ ໄດ້ສິ້ນສຸດລົງ;
2. ມີການເປີດການສືບທອດມູນມໍຣະດົກ.

ຈຸດປະສົງ	ເພື່ອກຳນົດຜົນທາງການກົດໝາຍ ຕໍ່ບຸກຄົນທີ່ຖືກສານປະກາດວ່າເປັນຜູ້ເສຍຊີວິດຕາມຄຳຕັດສິນຂອງສານ
ຕົວຢ່າງ	**ອີງຕາມຕົວຢ່າງຂອງມາດຕາ 99,** ເມື່ອ **ກ** ຖືກປະກາດວ່າເສຍຊີວິດຕາມຄຳຕັດສິນຂອງສານ ແລະ **ຂ** ໄດ້ແຈ້ງຈົດທະບຽນການເສຍຊີວິດຕາມຄຳຕັດສິນຂອງສານແລ້ວ, ສາຍພົວພັນຜົວເມຍລະຫວ່າງ **ກ** ແລະ **ຂ** ກໍສິ້ນສຸດລົງ ແລະເປັນພື້ນຖານໃຫ້ແກ່ການສືບທອດມູນມໍຣະດົກ ຂອງ **ກ** ຕາມກົດໝາຍ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ປີ 2012 ມາດຕາ 342 ທີ່ກຳນົດຜົນທາງດ້ານກົດໝາຍເມື່ອສານປະກາດວ່າບຸກຄົນໃດໜຶ່ງເສຍຊີວິດຕາມຄຳຕັດສິນຂອງສານ ແລະ ກົດໝາຍວ່າດ້ວຍຄອບຄົວ ປີ 2008, ມາດຕາ 22 ຂອງກົດໝາຍວ່າດ້ວຍທະບຽນຄອບຄົວ ຊຶ່ງມາດຕານີ້ ໄດ້ປັບປຸງ ໂດຍເອົາເນື້ອໃນເຫຼົ່ານັ້ນເຂົ້າກັນ ແລະ ຈັດລຽນຄືນໃໝ່ໃຫ້ສອດຄ່ອງ ໂດຍສະເພາະຜົນສະທ້ອນທາງດ້ານກົດໝາຍ: (1). ການສິ້ນສຸດສາຍພົວພັນຜົວເມຍ; ແລະ (2). ພື້ນຖານໃນການເລີ່ມສິດສືບທອດມູນມໍຣະດົກ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 72 ຂອງປະມວນກົດໝາຍແພ່ງ ຫວຽດນາມ ປີ 2015.
ມາດຕາອ້າງອີງ	ພາກທີ VIII ຂອງປະມວນກົດໝາຍແພ່ງ ກ່ຽວກັບການເປີດການສືບທອດມູນມໍລະດົກ; ມາດຕາ 99 ຂອງປະມວນກົດໝາຍແພ່ງ, ການຈົດທະບຽນການຜູ້ເສຍຊີວິດຕາມຄຳຕັດສິນຂອງສານ; ມາດຕາ 189 ຜົນຂອງການສິ້ນສຸດຂອງສາຍພົວພັນຜົວເມຍ; ມາດຕາ 190 ຂອງການສິ້ນສຸດການໃຊ້ນາມສະກຸນດຽວກັນ.
ຂໍ້ມູນອື່ນ	ສືບຕໍ່ຄົ້ນຄວ້າ.

ມາດຕາ 101 ການລົບລ້າງການປະກາດວ່າເປັນຜູ້ເສຍຊີວິດ

ເມື່ອບຸກຄົນທີ່ສານໄດ້ຕັດສິນປະກາດວ່າເປັນຜູ້ເສຍຊີວິດ ຫາກກັບຄືນມາ ຫຼື ມີຫຼັກຖານທີ່ເຊື່ອຖືໄດ້ວ່າ ຜູ້ກ່ຽວຍັງມີຊີວິດຢູ່, ຜູ້ກ່ຽວ, ຜູ້ມີສິດ ຫຼື ຜູ້ມີຜົນປະໂຫຍດກ່ຽວຂ້ອງ ມີສິດຮ້ອງຂໍ ໃຫ້ສານພິຈາລະນາລົບລ້າງ ຄຳຕັດສິນທີ່ໄດ້ປະກາດວ່າຜູ້ກ່ຽວເປັນຜູ້ເສຍຊີວິດ.

ເມື່ອສານໄດ້ລົບລ້າງຄຳຕັດສິນດັ່ງກ່າວແລ້ວ ສິດ ແລະ ພັນທະຂອງຜູ້ກ່ຽວຕາມກົດໝາຍ ຈະຖືກຟື້ນຟູຄືນ ເວັ້ນເສຍແຕ່ ຜົວ ຫຼື ເມຍ ຫາກໄດ້ແຕ່ງດອງໃໝ່ ຫຼື ຊັບສົມບັດທີ່ໄດ້ຊີ້ຂາດ ຢ່າງຖືກຕ້ອງຕາມກົດໝາຍແລ້ວ.

ຈຸດປະສົງ	ເພື່ອກຳນົດສິດ ໃຫ້ຜູ້ທີ່ຖືກສານຕັດສິນປະກາດວ່າເປັນຜູ້ເສຍຊີວິດຕາມຄຳຕັດສິນຂອງສານໄດ້ຂໍລົບລ້າງຄຳຕັດສິນຂອງສານພາຍຫຼັງທີ່ກັບຄືນມາ ຫຼື ຜູ້ມີສິດຂໍ ໃຫ້ສານພິຈາລະນາການລົບລ້າງການປະກາດວ່າເປັນຜູ້ເສຍຊີວິດຕາມຄຳຕັດສິນຂອງສານ ຫຼື ມີຫຼັກຖານທີ່ເຊື່ອຖືໄດ້ວ່າຜູ້ກ່ຽວຍັງມີຊີວິດຢູ່.

ຕົວຢ່າງ	ອີງຕາມຕົວຢ່າງມາດຕາ 100, ຕໍ່ມາ **ກ** ໄດ້ກັບຄືນມາ ຈຶ່ງຮູ້ວ່າຖືກສານຕັດສິນເປັນຜູ້ເສຍຊີວິດ ຈຶ່ງຂຽນຄຳຮ້ອງຕໍ່ສານໃຫ້ສານລົບລ້າງຄຳຕັດສິນທີ່ໄດ້ປະກາດວ່າຕົນເປັນຜູ້ເສຍຊີວິດ. ໃນກໍລະນີນີ້, ຊັບສິນຂອງ **ກ** ທີ່ຍັງເຫຼືອຢູ່ນຳ **ຂ** ທີ່ເປັນຜູ້ຄຸ້ມຄອງນັ້ນ ຕ້ອງໄດ້ສົ່ງຄືນໃຫ້ຜູ້ກ່ຽວ, ເວັ້ນເສຍແຕ່ ລົດເກງທີ່ **ຂ** ໄດ້ຊື້ຂາດເພື່ອໃຊ້ແທນໜີ້ສິນຂອງ **ກ**; ແລະ **ຂ** ຜູ້ເປັນເມຍ ໄດ້ແຕ່ງດອງກັບຜູ້ອື່ນຢ່າງຖືກຕ້ອງຕາມກົດໝາຍແລ້ວ, **ກ** ຈະບໍ່ໄດ້ **ຂ** ເປັນເມຍຄືນ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ປີ 2012 ມາດຕາ 342 ທີ່ກຳນົດຫຼັກການໃນການຂໍລົບລ້າງຄຳຕັດສິນຂອງສານທີ່ປະກາດວ່າເປັນຜູ້ຫາຍສາບສູນ; ແລະ ກົດໝາຍວ່າດ້ວຍທະບຽນຄອບຄົວ ປີ 2018 ມາດຕາ 32 ທີ່ກຳນົດກ່ຽວກັບການປ່ຽນແປງ, ການລົບລ້າງ ແລະ ການຄັດຄ້ານການຈົດທະບຽນຄອບຄົວ ຊຶ່ງປັບປຸງໃນສ່ວນທີ່ເປັນຫຼັກການທາງດ້ານແພ່ງເທົ່ານັ້ນ, ສ່ວນຫຼັກການ ແລະ ວິທີການໃນການດຳເນີນການຮ້ອງຂໍລົບລ້າງ ແລະ ການແຈ້ງລົບລ້າງການຈົດທະບຽນການເສຍຊີວິດຕາມຄຳຕັດສິນຂອງສານ ຍັງຮັກສາໄວ້ໃນກົດໝາຍກ່ຽວ ຂ້ອງຄືເກົ່າ. ຄຳວ່າ "**ຜູ້ມີສິດ**" ໃນມາດຕາ 93 ຂອງປະມວນກົດໝາຍແພ່ງ. ໃນກໍລະນີທີ່ໄດ້ຈົດທະບຽນເສຍຊີວິດແລ້ວ ແຕ່ຜົວ ຫຼື ເມຍ ທີ່ຍັງມີຊີວິດຢູ່ແຕ່ຍັງບໍ່ໄດ້ແຕ່ງງານໃໝ່ ເມື່ອເວລາ ທີ່ຜົວ ຫຼື ເມຍກັບມາກໍສາມາດຟື້ນຟູສາຍພົວພັນຜົວເມຍຄືເກົ່າ ໂດຍບໍ່ຈຳເປັນຕ້ອງໄດ້ແຈ້ງຈົດທະບຽນແຕ່ງດອງໃໝ່ມີ ແຕ່ລົບລ້າງການຈົດທະບຽນການເສຍຊີວິດຕາມການຕັດສິນຂອງສານ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 32 ຂອງປະມວນກົດໝາຍແພ່ງ ຍີ່ປຸ່ນ; ມາດຕາ 73 ຂອງປະມວນກົດໝາຍແພ່ງ ຫວຽດນາມ ປີ 2015.
ມາດຕາອ້າງອີງ	ມາດຕາ 100 ຜົນຂອງການປະກາດວ່າເປັນຜູ້ເສຍຊີວິດຕາມຄຳຕັດສິນຂອງສານ ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ	ສືບຕໍ່ຄົ້ນຄວ້າ.

ໝວດທີ 2
ນິຕິບຸກຄົນ

ກ. ຫຼັກການທົ່ວໄປ

ມາດຕາ 102 ນິຕິບຸກຄົນ

ນິຕິບຸກຄົນ ແມ່ນການຈັດຕັ້ງທີ່ໄດ້ຮັບການສ້າງຕັ້ງຂຶ້ນ ຢ່າງຖືກຕ້ອງຕາມກົດໝາຍ, ສາມາດເຂົ້າຮ່ວມໃນສາຍພົວພັນທາງແພ່ງ, ມີສິດ ແລະ ພັນທະ, ມີຄວາມສາມາດເປັນໂຈດ ແລະ ຈຳເລີຍຄືກັນກັບບຸກຄົນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ນິຕິບຸກຄົນ ມີອົງປະກອບພື້ນຖານ ດັ່ງນີ້:

1. ມີກົດລະບຽບຂອງຕົນ;
2. ໄດ້ຮັບການຂຶ້ນທະບຽນຖືກຕ້ອງຕາມກົດໝາຍ;
3. ມີໂຄງປະກອບການຈັດຕັ້ງ ທີ່ເປັນລະບົບ ເຊັ່ນ ມີຕົວແທນ, ມີການບໍລິຫານຈັດການ;
4. ມີຊັບສົມບັດ ແລະ ມີຄວາມຮັບຜິດຊອບຕໍ່ໜີ້ສິນ;

5. ມີຄວາມເປັນເອກະລາດ ເຂົ້າຮ່ວມໃນສາຍພົວພັນທາງກົດໝາຍໃນນາມຕົນເອງ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ວ່າ ນິຕິບຸກຄົນ ກໍແມ່ນເຈົ້າກຳທາງດ້ານກົດໝາຍ ຄືກັນກັບບຸກຄົນທົ່ວໄປ. ເພື່ອກຳນົດໃຫ້ຮູ້ອົງປະກອບພື້ນຖານຂອງນິຕິບຸກຄົນ.
ຕົວຢ່າງ	**1.** ບໍລິສັດ **ກ** ສ້າງຕັ້ງຂຶ້ນ ແລະ ຈົດທະບຽນຢ່າງຖືກຕ້ອງຕາມກົດໝາຍຂອງ ສປປ ລາວ ໂດຍມີ **ຂ** ຜູ້ອຳນວຍການບໍລິສັດ ເປັນຜູ້ຕາໜ້າງບໍລິສັດ, **ຂ** ເປັນຜູ້ທີ່ມີສິດອຳນາດໃນການເຮັດນິຕິກຳ ຫຼື ສັນຍາ ກັບ ບຸກຄົນອື່ນ ໃນນາມຕາງໜ້າບໍລິສັດ **ກ.** **2.** ບໍລິສັດ **ກ** ຕາງໜ້າ ໂດຍ **ຂ** ຜູ້ອຳນວຍການບໍລິສັດ ຕົກລົງຊື້ຂາຍ ເຂົ້າ ກັບ **ຄ**, ເມື່ອ **ກ** ໄດ້ຮັບເຂົ້າໄປແລ້ວ ແຕ່ **ກ** ບໍ່ໄດ້ຈ່າຍເງິນຕາມສັນຍາ ຊື້ເຂົ້າ, **ຄ** ໄດ້ທວງເອົາຄ່າເຂົ້າ ແລະ ຄ່າປ່ວຍການຕ່າງໆ ກັບບໍລິສັດ **ກ** ແລ້ວ ແຕ່ບໍ່ໄດ້ຮັບການຕອບສະໜອງ, **ຄ** ຈຶ່ງຮ້ອງຟ້ອງທວງເອົາຄ່າເຂົ້າ ແລະ ຄ່າໃຊ້ຈ່າຍອື່ນໆ ຈາກບໍລິສັດ **ກ.**
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງຂຶ້ນໃໝ່ພັດທະນາມາຈາກກົດໝາຍວ່າດ້ວຍວິສາຫະກິດທີ່ໄດ້ຮັບຮອງ ແລະ ປະກາດໃຊ້ກ່ອນໜ້າປະມວນກົດໝາຍແພ່ງ ຊຶ່ງກຳນົດຫຼັກການ ລວມພື້ນຖານຂອງນິຕິບຸກຄົນ ໂດຍເບິ່ງໃນແງ່ຂອງນິຕິບຸກຄົນໃນແງ່ດ້ານເສດ ຖະກິດເປັນຕົ້ນຕໍ (ວິສາຫະກິດຮຸ້ນສ່ວນຈຳກັດ, ບໍລິສັດ, ແລະ ບໍລິສັດ ມະຫາຊົນ)
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 74 ຂອງປະມວນແພ່ງຫວຽດນາມ ປີ 2015; ມາດຕາ 65 ຂອງປະມວນກົດໝາຍແພ່ງ ແລະ ພານິດ ໄທ.
ມາດຕາອ້າງອີງ	ມາດຕາ 3, 12 ແລະ 16 ຂອງກົດໝາຍວ່າດ້ວຍວິສາຫະກິດ; ມາດຕາ 17, 18, 19, 20 ແລະ 21 ຂອງກົດໝາຍວ່າດ້ວຍການປະກັນໄພ ລາວ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 103 ຄວາມສາມາດທາງດ້ານກົດໝາຍຂອງນິຕິບຸກຄົນ

ຄວາມສາມາດທາງດ້ານກົດໝາຍຂອງນິຕິບຸກຄົນ ແມ່ນຄວາມສາມາດມີສິດ ແລະ ພັນທະ ໂດຍສອດ ຄ່ອງກັບຈຸດປະສົງ ທີ່ໄດ້ກຳນົດໄວ້ໃນກົດລະບຽບຂອງນິຕິບຸກຄົນ, ກົດໝາຍ ແລະ ລະບຽບ ການທີ່ກ່ຽວຂ້ອງ.

ຄວາມສາມາດທາງດ້ານກົດໝາຍຂອງນິຕິບຸກຄົນ ເກີດຂຶ້ນນັບແຕ່ວັນໄດ້ຮັບການສ້າງຕັ້ງຂຶ້ນ ຢ່າງຖືກ ຕ້ອງຕາມກົດໝາຍ.

ສຳລັບນິຕິບຸກຄົນຕ່າງປະເທດ ທີ່ຮັບຮູ້ຕາມກົດໝາຍຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ມີສິດ ແລະ ພັນທະ ຄືກັນກັບນິຕິບຸກຄົນພາຍໃນ ເວັ້ນເສຍແຕ່ ກົດໝາຍຫາກໄດ້ກຳນົດ ໄວ້ເປັນຢ່າງອື່ນ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ຄວາມສາມາດທາງດ້ານກົດໝາຍ ຂອງນິຕິບຸກຄົນໃນພາຍ ຫຼື ຕ່າງປະເທດ ໃນການປະຕິບັດມີສິດ ແລະ ພັນທະຕາມທີ່ກຳນົດໄວ້ ໃນກົດໝາຍ ແລະ ລະບຽບການ.
ຕົວຢ່າງ	**ກ, ຂ, ຄ** ແລະ **ງ** ລົງທຶນຮ່ວມກັນ ສ້າງຕັ້ງບໍລິສັດ **ຈ** ຈຳກັດ ແລະ ຈົດທະບຽນ ຢ່າງຖືກຕ້ອງຕາມກົດໝາຍຂອງ ສປປ ລາວ, ແລະ ທັງ **ກ, ຂ, ຄ** ແລະ **ງ** ຕົກລົງ ໃຫ້ **ຂ** ເປັນຜູ້ອຳນວຍການຜູ້ຕາງໜ້າບໍລິສັດ, ນັບແຕ່ໄດ້ຮັບການຈົດທະບຽນ ວິສາຫະກິດ ເປັນຕົ້ນໄປ ບໍລິສັດ **ຈ** ຈຳກັດ ມີສິດທາງດ້ານກົດໝາຍ ຄື ກັບ ບຸກຄົນທົ່ວໄປ ທີ່ສາມາດເຮັດນິຕິກຳ ໄດ້ຕາມກົດໝາຍ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງຂຶ້ນໃໝ່ເພື່ອໃຫ້ສອດຄ່ອງກັບມາດຕາ 63, 64 ແລະ 102 ຂອງ ປະມວນກົດໝາຍແພ່ງ ຍ້ອນວ່າບໍລິສັດ ມີຖານະນິຕິບຸກຄົນ ແລະ ສະນັ້ນ ນິຕິ ບຸກຄົນ ຕ້ອງມີຄວາມສາມາດທາງດ້ານກົດໝາຍຄືກັນ ກັບ ບຸກຄົນທົ່ວໄປ.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງ ຂອງປະເທດອື່ນ	ມາດຕາ 66 ຂອງປະມວນກົດໝາຍແພ່ງ ແລະ ພານິດ ໄທ; ມາດຕາ 86 ຂອງປະມວນກົດໝາຍແພ່ງຫວຽດນາມປີ 2015; ມາດຕາ 48 ວັກ 3, ຂໍ້ 3 ຂອງປະມວນກົດໝາຍແພ່ງກຳປູເຈຍ; ມາດຕາ 35 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 104 ຄວາມສາມາດທາງດ້ານການປະພຶດຂອງນິຕິບຸກຄົນ

ຄວາມສາມາດທາງດ້ານການປະພຶດຂອງນິຕິບຸກຄົນ ແມ່ນຄວາມສາມາດນຳໃຊ້ສິດ ແລະ ປະຕິບັດພັນທະດ້ວຍຕົນເອງ.

ນິຕິບຸກຄົນມີຄວາມສາມາດທາງດ້ານການປະພຶດ ນັບແຕ່ວັນໄດ້ຮັບການສ້າງຕັ້ງຢ່າງຖືກຕ້ອງ ຕາມກົດໝາຍ ຈົນຮອດວັນສິ້ນສຸດການເປັນນິຕິບຸກຄົນ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ຄວາມສາມາດໃນການເຄື່ອນໄຫວຂອງນິຕິບຸກ. ເພື່ອກຳນົດໃຫ້ຮູ້ຄວາມສາມາດທາງດ້ານການປະພຶດ ຂອງນິຕິບຸກຄົນເກີດຂຶ້ນ ແລະ ສິ້ນສຸດນັບແຕ່ເວລາໃດເປັນຕົ້ນໄປ.
ຕົວຢ່າງ	ສະມາຄົມ **ກ** ໂດຍມີ **ຄ** ເປັນປະທານຂອງສະມາຄົມ **ກ** ໄດ້ຖືກສ້າງຕັ້ງ ຂຶ້ນຖືກຕ້ອງຕາມກົດໝາຍ ຈຶ່ງມີຄວາມສາມາດທາງດ້ານການປະພຶດ ໃນ ການເຂົ້າຮ່ວມ ເຮັດສັນຍາສ້ອມແປງຫ້ອງການຂອງສະມາຄົມ ກັບ ບໍລິສັດ ສ້ອມແປງ **ຂ**.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງຂຶ້ນໃໝ່ໄດ້ນຳເອົາແນວຄວາມຄິດຂອງມາດຕາ 12 ຂອງກົດໝາຍ ວ່າດ້ວຍຂໍ້ຜູກພັນໃນ ແລະ ນອກສັນຍາ, ວັກ 1 ແລະ ວັກ 3 ມາສ້າງຂຶ້ນ ເພື່ອ ກຳນົດໄວ້ເປັນຫຼັກການລວມ ໄວ້ໃນປະມວນກົດໝາຍແພ່ງ ແລະ ເປັນບ່ອນອີງ ໃນການແກ້ໄຂບັນຫາ ທີ່ກ່ຽວຂ້ອງກັບຄວາມສາມາດທາງດ້ານການປະພຶດຂອງ ນິຕິບຸກຄົນ.

ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 86 ຂອງປະມວນກົດໝາຍແພ່ງຫວຽດນາມປີ 2015.
ມາດຕາອ້າງອີງ	ມາດຕາ 67 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 105 ການສ້າງຕັ້ງນິຕິບຸກຄົນ

ນິຕິບຸກຄົນ ອາດຈະສ້າງຕັ້ງຕາມ ກໍລະນີ ດັ່ງນີ້:

1. ດ້ວຍການລວມຕົວຂອງບຸກຄົນ;
2. ດ້ວຍການລວມຊັບ.

ນິຕິບຸກຄົນ ອາດຈະສ້າງຕັ້ງດ້ວຍບຸກຄົນຜູ້ດຽວ ຊຶ່ງເອີ້ນວ່າ ບໍລິສັດຈຳກັດຜູ້ດຽວ.

ຈຸດປະສົງ	ເພື່ອກຳນົດຮູບການທີ່ຈຳເປັນໃນການສ້າງນິຕິບຸກຄົນ.
ຕົວຢ່າງ	ເບິ່ງຕົວຢ່າງ ມາດຕາ 105 ແລະ 107 ຂອງບົດອະທິບາຍປະມວນກົດໝາຍແພ່ງ.
ເຫດຜົນໃນສ້າງຂຶ້ນໃໝ່	ມາດຕານີ້ສ້າງຂຶ້ນໃໝ່ບົນພື້ນຖານຂອງຮູບການທົ່ວໄປຂອງນິຕິບຸກຄົນ. ເຖິງຢ່າງໃດກໍຕາມ ອີງຕາມເງື່ອນໄຂທາງດ້ານເສດຖະກິດ ແລະ ຈຸດພິເສດຂອງ ສປປ ລາວ, ຈຶ່ງໄດ້ຮັບຮູ້ໃຫ້ມີ ບໍລິສັດຈຳກັດຜູ້ດຽວ ຊຶ່ງແມ່ນຜູ້ດຽວ ເປັນຜູ້ສ້າງຕັ້ງຂຶ້ນ ແລະ ປະກອບທຶນຂອງຕົນເອງ ຕາມທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍ ວິສາຫະກິດ ປີ 2013.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 106 ນິຕິບຸກຄົນທີ່ສ້າງຕັ້ງຂຶ້ນດ້ວຍການລວມຕົວຂອງບຸກຄົນ

ນິຕິບຸກຄົນທີ່ສ້າງຕັ້ງຂຶ້ນດ້ວຍ ການລວມຕົວຂອງບຸກຄົນ ແມ່ນການລວມຕົວຂອງສອງບຸກຄົນ ຂຶ້ນໄປ ຊຶ່ງມີເຈດຕະນາ ແລະ ວັດຖຸປະສົງອັນດຽວກັນ. ໃນການສ້າງຕັ້ງ ແລະ ເຄື່ອນໄຫວ ເພື່ອຫວັງ ຜົນກຳໄລໃນຮູບແບບບໍລິສັດ ຫຼື ວິສາຫະກິດ ຫຼື ເພື່ອບໍ່ຫວັງຜົນກຳໄລ ໃນຮູບແບບສະມາຄົມ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ ຄວາມໝາຍຂອງນິຕິບຸກຄົນ ທີ່ສ້າງຕັ້ງຂຶ້ນດ້ວຍການລວມຕົວ ຂອງບຸກຄົນ
ຕົວຢ່າງ	**1. ກ, ຂ,** ແລະ **ຄ** ໄດ້ເຫັນດີລົງທຶນນຳກັນສ້າງຕັ້ງບໍລິສັດ **ງ** ເພື່ອເຮັດ ທຸລະກິດຊື້ຂາຍເຂົ້າ ເພື່ອຫາຜົນກຳໄລ. **2. ກ, ຂ, ຄ** ແລະ **ງ** ໄດ້ຕົກລົງກັນສ້າງຕັ້ງສະມາຄົມຊ່ວຍເຫຼືອຜູ້ທຸກຍາກ ຂຶ້ນ ເພື່ອຊ່ວຍເຫຼືອຜູ້ທຸກຍາກ ຊຶ່ງເຄື່ອນໄຫວໂດຍບໍ່ຫວັງຜົນກຳໄລ.

ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງຂຶ້ນໃໝ່ ເພື່ອຈຳແນກໃຫ້ເຫັນກ່ຽວກັບບຸກຄົນທີ່ຈະສ້າງຕັ້ງນິຕິບຸກຄົນ, ຈຸດປະສົງ ແລະ ເປົ້າໝາຍໃນການສ້າງຕັ້ງ ແລະ ເຄື່ອນໄຫວ ຂອງນິຕິບຸກຄົນ ຊຶ່ງແຍກອອກເປັນສອງລັກສະນະ: - ເພື່ອຫວັງຜົນກຳໄລ (ຮູບແບບວິສາຫະກິດ ຫຼື ບໍລິສັດ) - ເພື່ອບໍ່ຫວັງຜົນກຳໄລ (ຮູບແບບສະມາຄົມ).
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 75 ຂໍ້ 2 ຂອງປະມວນກົດແພ່ງຫວຽດນາມປີ 2015.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 107 ນິຕິບຸກຄົນທີ່ສ້າງຕັ້ງຂຶ້ນດ້ວຍການລວມຊັບ

ນິຕິບຸກຄົນ ທີ່ສ້າງຕັ້ງຂຶ້ນດ້ວຍການລວມຊັບ ແມ່ນການປະກອບທຶນ ຫຼື ວັດຖຸຂອງບຸກຄົນ ຫຼື ກຸ່ມຄົນ ຊຶ່ງມີເຈດຕະນາ ແລະ ວັດຖຸປະສົງອັນດຽວກັນໃນການສ້າງຕັ້ງ ແລະ ເຄື່ອນໄຫວໃນຮູບແບບມູນນິທິ ໂດຍບໍ່ຫວັງຜົນກຳໄລ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ຄວາມໝາຍຂອງນິຕິບຸກຄົນ ທີ່ສ້າງຕັ້ງຂຶ້ນດ້ວຍການລວມຊັບ ເປັນນິຕິບຸກທີ່ບໍ່ຫວັງຜົນກຳໄລ.
ຕົວຢ່າງ	**ກ, ຂ, ຄ** ແລະ **ງ** ໄດ້ຕົກລົງອອກຊັບສິນຂອງຕົນດ້ວຍຄວາມສະໝັກໃຈ ສ້າງມູນນິທິ **ຈ** ຂຶ້ນເພື່ອຊ່ວຍເຫຼືອນັກຮຽນໃນເຂດທຸລະກັນດານ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງຂຶ້ນໃໝ່ ເພື່ອຮັບຮູ້ການສ້າງຕັ້ງນິຕິບຸກຄົນດ້ວຍ ການລວມຊັບ ແລະ ເປົ້າໝາຍສຳຄັນຂອງນິຕິບຸກຄົນປະເພດນີ້ ບໍ່ແມ່ນການເຄື່ອນໄຫວ ເພື່ອຜົນກຳໄລ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 76 ຂໍ້ 2 ຂອງປະມວນກົດໝາຍແພ່ງຫວຽດນາມ.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 108 ກົດລະບຽບຂອງນິຕິບຸກຄົນ

ກົດລະບຽບຂອງນິຕິບຸກຄົນ ຕ້ອງໄດ້ຮັບການຮັບຮອງຈາກພາກສ່ວນກ່ຽວຂ້ອງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ເນື້ອໃນຕົ້ນຕໍ ກົດລະບຽບຂອງນິຕິບຸກຄົນ ມີດັ່ງນີ້:

1. ຊື່ຂອງນິຕິບຸກຄົນ;
2. ຈຸດປະສົງ ແລະ ຂອບເຂດການເຄື່ອນໄຫວຂອງນິຕິບຸກຄົນ;
3. ສະຖານທີ່ຕັ້ງນິຕິບຸກຄົນ;
4. ທຶນຈົດທະບຽນ, ຖ້າຫາກມີ;
5. ໂຄງປະກອບການຈັດຕັ້ງ ແລະ ການຄຸ້ມຄອງບໍລິຫານຂອງນິຕິບຸກຄົນ;
6. ການປັບປຸງ ຫຼື ປ່ຽນແປງ ເນື້ອໃນຂອງກົດລະບຽບ;
7. ການຄວບ, ແຍກ ຫຼື ຍຸບເລີກນິຕິບຸກຄົນ;
8. ການເປັນສະມາຊິກ, ສິດ ແລະ ພັນທະຂອງສະມາຊິກ ສຳລັບນິຕິບຸກຄົນທີ່ສ້າງຕັ້ງຂຶ້ນດ້ວຍການ ລວມຕົວຂອງບຸກຄົນ;
9. ຜູ້ປະກອບຊັບ, ລາຍການຊັບ ແລະ ມູນຄ່າຊັບ ສຳລັບນິຕິບຸກຄົນທີ່ສ້າງຕັ້ງຂຶ້ນດ້ວຍການລວມຊັບ;
10. ການແກ້ໄຂຂໍ້ຂັດແຍ່ງ.

ການປັບປຸງ ຫຼື ປ່ຽນແປງ ເນື້ອໃນຂອງກົດລະບຽບ ຕ້ອງໄດ້ແຈ້ງຕໍ່ຂະແໜງການກ່ຽວຂ້ອງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ວ່ານິຕິບຸກຄົນສ້າງຕັ້ງຂຶ້ນໃນເປົ້າໝາຍທີ່ຫຼາກຫຼາຍແຕກຕ່າງກັບບຸກຄົນ, ສະນັ້ນ ຈຶ່ງກຳນົດເພື່ອໃຫ້ຮູ້ກ່ຽວກັບເນື້ອໃນຂອງກົດລະບຽບທີ່ຊີ້ບອກລະອຽດວ່ານິຕິບຸກຄົນດັ່ງກ່າວສ້າງຂຶ້ນດ້ວຍເປົ້າໝາຍໃດ ແລະ ເປັນການຈັດຕັ້ງແບບໃດ.
ຕົວຢ່າງ	**ກ, ຂ, ຄ** ແລະ **ງ** ໄດ້ຕົກລົງກັນສ້າງຕັ້ງສະມາຄົມ **ຈ** ເພື່ອຊ່ວຍເຫຼືອຜູ້ທຸກຍາກຂຶ້ນ ຊຶ່ງເຄື່ອນໄຫວໂດຍບໍ່ຫວັງຜົນກຳໄລ ຊຶ່ງ **ກ, ຂ, ຄ** ແລະ **ງ** ຕ້ອງໄດ້ສ້າງກົດລະບຽບຂອງສະມາຄົມ **ຈ** ໃນຄົບຖ້ວນຕາມເນື້ອໃນຂອງມາດຕາ 108; ນອກຈາກນີ້ຍັງຕ້ອງໃຫ້ສອດຄ່ອງກັບນິຕິກຳທີ່ກ່ຽວຂ້ອງກັບເນື້ອໃນຂອງສະມາຄົມທີ່ຈະສ້າງຕັ້ງຂຶ້ນ ເຊັ່ນ ຂອບເຂດການເຄື່ອນໄຫວ, ການແຈ້ງ ແລະ ປະກອບທຶນ, ການຫາລາຍໄດ້ເຂົ້າສະມາຄົມເປັນຕົ້ນ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງຂຶ້ນໃໝ່. ກົດລະບຽບຂອງນິຕິບຸກຄົນ ມີຄວາມສຳຄັນທີ່ສຸດຕໍ່ການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ນິຕິບຸກຄົນ, ສະນັ້ນ ເນື້ອໃນທີ່ກຳນົດໄວ້ໃນມາດຕານີ້ ແມ່ນພື້ນຖານສຳຄັນທີ່ສຸດ ທີ່ຕ້ອງກຳນົດຂຶ້ນລະອຽດ ແລະ ຂາດບໍ່ໄດ້. ກົດລະບຽບຂອງນິຕິບຸກຄົນ ເປັນເງື່ອນໄຂໜຶ່ງ ໃນການສະເໜີສ້າງຕັ້ງນິຕິບຸກຄົນ ຕາມກົດໝາຍ ແລະ ນິຕິກຳທີ່ກ່ຽວຂ້ອງ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 77 ຂ້ 2 ຂອງປະມວນກົດໝາຍແພ່ງຫວຽດນາມ; - ສິດ ແລະ ພັນທະ ຂອງສະມາຊິກ, ຖ້າເປັນນິຕິ ບຸກຄົນທີ່ມີສະມາຊິກ; - ຮູບການຜ່ານຂໍ້ຕົກລົງຂອງນິຕິບຸກຄົນ; ຫຼັກການແກ້ໄຂຂໍ້ຂັດແຍ່ງພາຍໃນ;

	- ຮູບການປັບປຸງ, ປ່ຽນແປງກົດລະບຽບ; - ເງື່ອນໄຂລວມຕົວ, ແຍກຕົວ, ປ່ຽນຮູບການ ແລະ ຍຸບເລີກນິຕິບຸກຄົນ.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 109 ຊື່ຂອງນິຕິບຸກຄົນ

ຊື່ຂອງນິຕິບຸກຄົນ ໃຫ້ຂຽນເປັນພາສາລາວ ແລະ ພາສາຕ່າງປະເທດ, ບົ່ງບອກໃຫ້ເຫັນປະເພດການຈັດ ຕັ້ງຂອງນິຕິບຸກຄົນຢ່າງຈະແຈ້ງ ແລະ ໃຫ້ເຫັນຄວາມແຕກຕ່າງກັບນິຕິບຸກຄົນອື່ນ ທີ່ຢູ່ໃນຂົງເຂດການເຄື່ອນ ໄຫວດຽວກັນ.

ຊື່ຂອງນິຕິບຸກຄົນ ໃຫ້ບົ່ງບອກເຖິງຮູບແບບຂອງນິຕິບຸກຄົນນັ້ນ.

ຊື່ຂອງນິຕິບຸກຄົນ ໄດ້ຮັບການຮັບຮູ້ ແລະ ປົກປ້ອງດ້ວຍກົດໝາຍ.

ນິຕິບຸກຄົນ ຕ້ອງນຳໃຊ້ຊື່ຂອງຕົນໃນການເຄື່ອນໄຫວວຽກງານ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ ກ່ຽວກັບເງື່ອນໄຂ, ການເຄື່ອນໄຫວ ແລະ ຜົນຂອງການໃສ່ຊື່ນິ ຕິບຸກຄົນເພື່ອເຮັດໃຫ້ເຫັນຄວາມແຕກຕ່າງ ຂອງນິຕິບຸກຄົນໃນຂົງ ເຂດ ດຽວກັນ.
ຕົວຢ່າງ	1. ສະມາຄົມ **ກ** ເພື່ອທຶນການສຶກສາ. ສະມາຄົມບົ່ງບອກເຖິງຮູບການ ແລະ ປະເພດຂອງນິຕິບຸກຄົນ ແລະ ບອກການເຄື່ອນໄຫວຂອງສະມາ ຄົມໂດຍລວມ. 2. ບໍລິສັດ **ກ** ຈຳກັດ, ບົ່ງບອກຮູບການຂອງວິສາຫະກິດ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງຂຶ້ນໃໝ່ໂດຍມີພື້ນຖານມາຈາກຊື່ຂອງວິສຫະກິດ ອີງຕາມກົດ ໝາຍວ່າດ້ວຍວິສາຫະກິດເປັນຕົ້ນຕໍ ເພື່ອເຮັດໃຫ້ການໃສ່ຊື່ຂອງນິຕິບຸກຄົນ ຖືກຕ້ອງ ແລະ ສອດຄ່ອງກັບກັບເງື່ອນໄຂ, ປະເພດ, ການເຄື່ອນໄຫວ ແລະ ຜົນຂອງການໃສ່ຊື່ນິຕິບຸກຄົນ ເພື່ອເຮັດໃຫ້ເຫັນຄວາມແຕກຕ່າງ ຂອງນິຕິ ບຸກຄົນໃນຂົງເຂດດຽວກັນ.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງ ຂອງປະເທດອື່ນ	ມາດຕາ 78 ຂໍ້ 2 ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2015; ມາດຕາ 47 ຂອງປະມວນກົດໝາຍແພ່ງກຳປູເຈັຍ.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 110 ບ່ອນຢູ່ຂອງນິຕິບຸກຄົນ

ບ່ອນຢູ່ຂອງນິຕິບຸກຄົນ ແມ່ນ ສະຖານທີ່ຕັ້ງຂອງສຳນັກງານໃຫຍ່ ຂອງນິຕິບຸກຄົນ.

ບ່ອນຢູ່ຂອງນິຕິບຸກຄົນ ເປັນບ່ອນຢູ່ທີ່ໃຊ້ໃນການຕິດຕໍ່ພົວພັນວຽກງານ ຂອງນິຕິບຸກຄົນນັ້ນ. ນິຕິບຸກຄົນ ອາດຈະເລືອກເອົາບ່ອນອື່ນ ເປັນບ່ອນຕິດຕໍ່ພົວພັນວຽກງານ ກໍໄດ້ ເຊັ່ນ ສາຂາ ຫຼື ຫ້ອງການຜູ້ຕາງໜ້າຂອງຕົນ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ ສະຖານທີ່ຕັ້ງ ແລະ ຜົນທາງດ້ານກົດໝາຍຂອງນິຕິບຸກຄົນ (ເປັນບ່ອນຕິດຕໍ່ສື່ສານຂອງນິຕິບຸກຄົນ).
ຕົວຢ່າງ	1. ທະນາຄານ **ກ** ມີສາຂາຢູ່ທຸກເມືອງໃນທົ່ວປະເທດ ແຕ່ ມີສຳນັກງານໃຫຍ່ຕັ້ງຢູ່ ເມືອງ **ຂ**, ແຂວງ **ຄ** ຊຶ່ງເປັນບ່ອນຕິດຕໍ່ສື່ສານກັບບຸກຄົນອື່ນໃນການພົວພັນທາງແພ່ງ. 2. ບໍລິສັດ **ກ** ເຮັດສັນຍາບໍລິການໃຫ້ກັບ ບໍລິສັດ **ຂ** ສ້ອມແປງອາຄານ ຂອງສຳນັກງານໃຫຍ່ຂອງ **ກ** ທີ່ຕັ້ງຢູ່ ເມືອງ **ຄ**, ແຂວງ **ງ**. ແຕ່ສຳນັກງານໃຫຍ່ຂອງບໍລິສັດ **ຂ** ບໍ່ໄດ້ຕັ້ງຢູ່ເມືອງ **ຄ** ແລະ ແຂວງ **ງ** ຈຶ່ງໄດ້ເລືອກເອົາ ສາຂາຂອງຕົນ ຢູ່ ເມືອງ **ຄ** ແລະ ແຂວງ **ງ** ບ່ອນສຳນັກງານໃຫຍ່ຂອງ **ກ** ຕັ້ງຢູ່ ເປັນບ່ອນຕິດຕໍ່ກັບບໍລິສັດ **ຂ**.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງຂຶ້ນໃໝ່ ເພື່ອກຳນົດໃຫ້ຮູ້ບ່ອນຕິດຕໍ່ພົວພັນ, ເປັນບ່ອນປະຕິບັດສິດ, ພັນທະຂອງນິຕິບຸກຄົນ ຫຼື ເປັນບ່ອນສົ່ງໝາຍຮຽກ, ໝາຍເຊີນຂອງອົງການທີ່ມີສິດອຳນາດໃນການແກ້ໄຂຂໍ້ຂັດແຍ່ງ ທີ່ເກີດຂຶ້ນລະຫວ່າງນິຕິບຸກຄົນນີ້ ກັບນິຕິ ບຸກຄົນອື່ນ ຫຼື ກັບບຸກຄົນອື່ນ
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 79 ຂອງປະມວນກົດໝາຍແພ່ງຫວຽດນາມ.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 111 ໂຄງປະກອບການຈັດຕັ້ງ ແລະ ການຄຸ້ມຄອງບໍລິຫານນິຕິບຸກຄົນ

ນິຕິບຸກຄົນ ຕ້ອງມີໂຄງປະກອບການຈັດຕັ້ງຂອງຕົນ.

ໂຄງປະກອບການຈັດຕັ້ງ ແລະ ການຄຸ້ມຄອງບໍລິຫານນິຕິບຸກຄົນ ໄດ້ກຳນົດໄວ້ໃນກົດລະບຽບ ຂອງນິຕິ ບຸກຄົນ ຫຼື ຂໍ້ຕົກລົງສ້າງຕັ້ງນິຕິບຸກຄົນ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ກ່ຽວກັບການສ້າງຕັ້ງໂຄງປະກອບການຈັດຕັ້ງຂອງນິຕິບຸກຄົນ ຊຶ່ງມີສິດພື້ນຖານໃນຖານະເປັນການຈັດຕັ້ງທີ່ບຸກຄົນສ້າງຂຶ້ນ, ການເຄື່ອນໄຫວ ຂອງນິຕິບຸກຄົນ ຈະພາໃຫ້ເກີດສິດ ແລະ ພັນທະໃນຖານະເປັນການຈັດຕັ້ງ ແລະ ເພື່ອເຮັດໃຫ້ນິຕິບຸກຄົນ ສາມາດບັນລຸເປົ້າໝາຍຂອງການເຄື່ອນໄຫວດັ່ງ ກ່າວ ຈຶ່ງຈຳເປັນຕ້ອງມີໂຄງປະກອບການຈັດຕັ້ງທີ່ສາມາດຄຸ້ມຄອງບໍລິຫານໄດ້.

ຕົວຢ່າງ	ນິຕິບຸກຄົນໃດໜຶ່ງ ຕ້ອງມີໂຄງກອບການຈັດຕັ້ງທີ່ແນ່ນອນເຊັ່ນ ມີຄະນະອຳນວຍການ, ສະພາບໍລິຫານ, ຫົວໜ້າໜ່ວຍງານ ແລະ ພະນັກງານວິຊາ ການຕ່າງໆ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງຂຶ້ນໃໝ່ເພື່ອໃຫ້ຮູ້ຄະນະຮັບຜິດຊອບໃນການປະຕິບັດສິດ ແລະ ພັນທະຂອງນິຕິບຸກຄົນຕໍ່ບຸກຄົນ ພາຍນອກ ເມື່ອມີການພົວພັນວຽກງານໃດໜຶ່ງ ຫຼື ເກີດຂໍ້ຂັດແຍ່ງກັບບຸກຄົນດັ່ງກ່າວ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 83 ຂອງປະມວນກົດໝາຍແພ່ງຫວຽດນາມ;
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 112 ຕົວແທນຂອງນິຕິບຸກຄົນ

ຕົວແທນຂອງນິຕິບຸກຄົນ ແມ່ນ ຜູ້ຕາງໜ້າຂອງນິຕິບຸກຄົນ ຊຶ່ງເຄື່ອນໄຫວ ໃນນາມນິຕິບຸກຄົນ ເຊັ່ນ ປະທານ ຫຼື ຜູ້ອຳນວຍການໃຫຍ່ ຕາມທີ່ໄດ້ກຳນົດໄວ້ໃນກົດລະບຽບຂອງນິຕິບຸກຄົນ ຫຼື ກົດໝາຍ.

ໃນກໍລະນີທີ່ປະທານ ຫຼື ຜູ້ອຳນວຍການໃຫຍ່ ຫາກມອບໃຫ້ບຸກຄົນໃດໜຶ່ງໄປເຮັດວຽກແທນຕົນ ໃນນາມນິຕິບຸກຄົນ ໃຫ້ຖືວ່າບຸກຄົນນັ້ນ ເປັນຜູ້ຕາງໜ້າແທນ.

ນິຕິບຸກຄົນ ສາມາດມີ ຕົວແທນໜຶ່ງ ຫຼື ຫຼາຍຄົນໄດ້ ຕາມທີ່ໄດ້ກຳນົດໄວ້ໃນກົດລະບຽບຂອງຕົນ.

ໃນກໍລະນີ ຜົນປະ�โยດຂອງຕົວແທນ ຫາກຂັດກັບຜົນປະ�โยດຂອງນິຕິບຸກຄົນ, ຕົວແທນທີ່ກ່ຽວຂ້ອງນັ້ນ ບໍ່ມີສິດເຄື່ອນໄຫວໃນນາມນິຕິບຸກຄົນ ໃນສ່ວນທີ່ຂັດກັບຜົນປະ�โยດນັ້ນ, ເວັ້ນເສຍແຕ່ໄດ້ມີການຕົກລົງ ຫຼື ກຳນົດເປັນຢ່າງອື່ນ ໄວ້ໃນກົດລະບຽບຂອງນິຕິບຸກຄົນ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ວ່ານິຕິບຸກຄົນແມ່ນການຈັດຕັ້ງ ທີ່ສ້າງຂຶ້ນເພື່ອສາມາດເຄື່ອນໄຫວ ແລະ ມີສິດ ແລະ ພັນທະນັ້ນ, ຈຶ່ງຈຳເປັນຕ້ອງມີຕົວແທນ, ສະນັ້ນ ຈຸດປະສົງຂອງມາດຕານີ້ ແມ່ນການເຮັດໃຫ້ຮູ້ ກ່ຽວກັບ ການກຳນົດຕົວແທນ ຂອງນິຕິບຸກຄົນນັ້ນ ຈະດຳເນີນໄປຄືແນວໃດ, ຈຳນວນຂອງຕົວແທນ ແລະ ຂອບເຂດ ສິດໜ້າທີ່ຂອງຕົວແທນ(ໃນກໍລະນີຜົນປະ�โยດຂອງຕົວແທນຫາກ ຂັດກັບຜົນປະ�โยດຂອງນິຕິບຸກຄົນ ຕົວແທນຈະບໍ່ມີສິດເຄື່ອນໄຫວໃນນາມ ຂອງນິຕິບຸກຄົນໄດ້).
ຕົວຢ່າງ	1. **ກ** ປະທານສາມາຄົມລົດຕຸກໆ ນະຄອນຫຼວງວຽງຈັນ ໄດ້ເຮັດສັນຍາເຊົ່າ ຫ້ອງການຂອງສະມາຄົມ ໂດຍໄດ້ຮັບການເຫັນດີຈາກສະມາຊິກຂອງ ສະມາຄົມ. 2. ກອງປະຊຸມນິຕິບຸກຄົນ ໄດ້ມອບໃຫ້ປະທານນິຕິບຸກຄົນ ໄປເຮັດສັນຍາ ຊື້ປຶ້ມ ແບບຮຽນປະຖົມ ປ1 ເພື່ອໄປແຈກຢາຍ ແຕ່ປະທານໄດ້ມອບໃຫ້ **ກ** ໄປຊື້ປຶ້ມແທນ, ການໄປຊື້ປຶ້ມຂອງ **ກ** ແມ່ນໃນນາມປະທານມູນນິທິ. 3. **ກ** ແລະ **ຂ** ໄດ້ຖືກແຕ່ງຕັ້ງເປັນຕົວແທນຂອງມູນນິທິ **ຄ** ໂດຍສອດຄ່ອງ ກັບກົດລະບຽບ ຂອງມູນນິທິ **ຄ.**

	4. ມູນນິທິການສຶກສາ ຕົກລົງເຫັນດີໃຫ້ປະທານມູນນິທິຊື້ປື້ມແບບຮຽນປະຖົມສຶກສາ ເພື່ອໄປແຈກຢາຍໃຫ້ໂຮງຮຽນທີ່ຢູ່ຫ່າງໄກສອກຫຼີກ, ແຕ່ປະທານມູນນິທິ ໄດ້ເຮັດສັນຍາຊື້ປື້ມແບບຮຽນປະຖົມ ແລະ ປື້ມນິທານກັບຮ້ານຂາຍປື້ມ, ການຊື້ປື້ມນິທານດັ່ງກ່າວບໍ່ສອດຄ່ອງກັບມະຕິຕົກລົງຂອງມູນນິທິ, ປະທານມູນນິທິຕ້ອງໄດ້ຮັບຜິດຊອບຈ່າຍຄ່າປື້ມນິທານດັ່ງກ່າວເອງ ເພາະຜົນປະໂຫຍດຂອງປະທານມູນນິທິ ຂັດກັນກັບຜົນປະໂຫຍດຂອງນິຕິບຸກຄົນ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງຂຶ້ນໃໝ່ເພື່ອເຮັດໃຫ້ມີຄວາມເຂົ້າໃຈເປັນເອກະພາບຫຼາຍຂຶ້ນກ່ຽວກັບ ຕົວແທນ ຊຶ່ງເປັນຜູ້ຕາງໜ້າຂອງນິຕິບຸກຄົນ. ມາດຕານີ້ຜັນຂະຫຍາຍມາມາຈາກຫຼັງກການລວມຂອງການຕາງໜ້າທີ່ກຳນົດໄວ້ໃນພາກທີ I, ໝວດ 4 ຂອງປະມວນກົດໝາຍແພ່ງ. ຄຳວ່າ “ຕົວແທນ” ແມ່ນໃຊ້ເອີ້ນຜູ້ຕາງໜ້າຂອງນິຕິບຸກຄົນ ທີ່ບໍ່ໃຊ້ຄຳດຽວກັບກັບຄຳວ່າ “ຜູ້ຕາງໜ້າ” ເພາະການຕາງໜ້າຂອງນິຕິບຸກຄົນມີລັກສະນະສະເພາະພິເສດ (ຕາມຕົວຢ່າງ 4 ແລະ 5) ແລະ ມີຄວາມຊັບຊ້ອນຂອງສາຍພົວພັນທາງແພ່ງ ສະນັ້ນເພື່ອໃຫ້ເຫັນຄວາມແຕກຕ່າງ ແລະສາຍພົວພັນທີ່ຊັບຊ້ອນນີ້ ຈຶ່ງໃຊ້ຄຳວ່າຕົວແທນ. ຄຳວ່າ “ຜູ້ຕາງໜ້າແທນ” ແມ່ນບຸກຄົນທີ່ຖືກມອບໝາຍຈາກຕົວແທນ ຊຶ່ງມີສິດແລະໜ້າທີ່ຕາມການມອບໝາຍ; ຂອບເຂດສິດຂອງຜູ້ຕາງໜ້າແທນ ກຳນົດໄວ້ໃນມາດຕາ 39 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 85 ຂອງປະມວນກົດໝາຍແພ່ງຫວຽດນາມ; ມາດຕາ 70, 71, ແລະ 74 ຂອງປະມວນກົດໝາຍແພ່ງ ແລະ ພານິດໄທ.
ມາດຕາອ້າງອີງ	ມາດຕາ 36, 40, 41,103, 446 , 447 ແລະ 448 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 113 ການປ່ຽນຕົວແທນຂອງນິຕິບຸກຄົນ

ການປ່ຽນຕົວແທນ, ການຈຳກັດສິດ ຫຼື ການປ່ຽນສິດຂອງຕົວແທນນິຕິບຸກຄົນຈະມີຜົນກໍຕໍ່ເມື່ອ ໄດ້ ປະຕິບັດຖືກຕ້ອງ ຕາມທີ່ໄດ້ກຳນົດໄວ້ໃນກົດລະບຽບຂອງນິຕິບຸກຄົນ ແລະ ກົດໝາຍ ແຕ່ບໍ່ໃຫ້ມີຜົນສະທ້ອນຕໍ່ບຸກຄົນທີສາມ ທີ່ມີຄວາມບໍລິສຸດໃຈ.

ຈຸດປະສົງ	ເພື່ອກຳນົດຫຼັກການກ່ຽວກັບການປ່ຽນຕົວແທນຂອງນິຕິບຸກຄົນ. ເພື່ອປົກປ້ອງສິດ ແລະ ຜົນປະ�โຫຍດອັນຊອບທຳຂອງບຸກຄົນທີສາມທີ່ເຮັດນິຕິກຳກັບນິຕິບຸກຄົນ ດ້ວຍຄວາມບໍລິສຸດໃຈ.
ຕົວຢ່າງ	1. **ກ** ເປັນຜູ້ອຳນວຍການບໍລິສັດ **ຂ** ໄດ້ເຮັດສັນຍາຊື້ຂາຍ ກັບບໍລິສັດ **ຄ**. ຫຼັງຈາກນັ້ນ ເຖິງບໍລິສັດ **ຂ** ຈະປ່ຽນຜູ້ອຳນວຍການ ຈາກ **ກ** ເປັນ **ງ** ກໍຕາມ, ແຕ່ສັນຍາຊື້ຂາຍຍັງມີຜົນສືບຕໍ່. 2. **ກ** ປະທານສະມາຄົມ **ຂ** ໄດ້ເຮັດສັນຍາເຊົ່າຫ້ອງການກັບ **ຄ** ກຳນົດ 5 ປີ, ເກີນ 2 ປີ ທີ່ຄະນະບໍລິຫານງານສະມາຄົມຕົກລົງເຫັນດີ, ຕໍ່ມາຄະນະບໍລິຫານງານສະມາຄົມໄດ້ທັກທ້ວງການລະເມີດດັ່ງກ່າວ ແລະ ຕົກລົງໃຫ້ປະທານຍັງຢູ່ໃນຕຳແໜ່ງເກົ່າ ແຕ່ຈຳກັດສິດຂອງຜູ້ກ່ຽວ ຄືບໍ່ໃຫ້ເຮັດນິຕິກຳທີ່ກ່ຽວຂ້ອງກັບການເງິນອີກແຕ່ບໍ່ມີຜົນຕໍ່ສັນຍາເຊົ່າຫ້ອງການດັ່ງກ່າວ. 3. **ກ** ເປັນຜູ້ກໍ່ຕັ້ງ ແລະ ເປັນປະທານຂອງມູນນິທິ **ຂ**, ຕໍ່ມາສະມາຊິກຂອງມູນນິທິຈຳນວນໜຶ່ງ ຕ້ອງການໃຫ້ມີການປ່ຽນປະທານມູນນິທິ ເນື່ອງຈາກ **ກ** ເຈັບເປັນ ຕ້ອງນອນໂຮງໝໍ ແລະ ບໍ່ສາມາດເຄື່ອນໄຫວໄດ້ປົກກະຕິ, ບັນດາຜູ້ບໍລິຫານຂອງມູນນິທິຈຶ່ງປະຊຸມກັນ ໂດຍບໍ່ໄດ້ເຊີນຜູ້ຕາງໜ້າຕາມກົດໝາຍຂອງ **ກ** (ເມຍຂອງ **ກ**) ເຂົ້າຮ່ວມນຳ ຊຶ່ງຜິດກົດລະບຽບຂອງມູນນິທິ, ມະຕິຕົກລົງດັ່ງກ່າວ ລະເມີດກົດລະບຽບຂອງມູນນິທິ ແລະ ບໍ່ມີຜົນຕໍ່ຖານະການເປັນປະທານຂອງ ກ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງຂຶ້ນມາໃໝ່ ເພື່ອກຳນົດຫຼັກການກ່ຽວກັບການປ່ຽນຕົວແທນ, ການຈຳກັດສິດ ຫຼື ການປ່ຽນຕົວແທນຂອງນິຕິບຸກຄົນ ແນໃສ່ປົກປ້ອງປົກຄົນທີສາມ ທີ່ມີຄວາມບໍລິສຸດໃຈ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 72 ຂອງປະມວນກົດໝາຍແພ່ງ ແລະ ພານິດ ໄທ.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 114 ການພົ້ນຈາກການເປັນຕົວແທນຂອງນິຕິບຸກຄົນ

ການພົ້ນຈາກການເປັນຕົວແທນຂອງນິຕິບຸກຄົນ ເກີດຂຶ້ນໃນກໍລະນີ ດັ່ງນີ້:

1. ຄົບອາຍຸການ;
2. ຖືກປົດຕຳແໜ່ງ;
3. ມີການລະເມີດຂັ້ນຕອນການເລືອກຕັ້ງ, ເປັນຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດ ຫຼື ເປັນຜູ້ລົ້ມລະລາຍ ຕາມຄຳຕັດສິນຂອງສານ;
4. ເສຍຊີວິດ, ລາອອກ, ຂາດເງື່ອນໄຂຂອງການເປັນຕົວແທນນິຕິບຸກຄົນ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນກໍລະນີທີ່ເຮັດໃຫ້ຕົວແທນຂອງນິຕິບຸກຄົນ ພົ້ນຈາກຕຳແໜ່ງຕາມກົດໝາຍ.
ຕົວຢ່າງ	1. ໃນປີ 2015 **ກ** ໄດ້ຖືກເລືອກຕັ້ງເປັນປະທານສະມາຄົມ **ຂ** ຮອດ ປີ 2020 **ກ** ກໍຈະພົ້ນຈາກຕຳແໜ່ງເປັນປະທານຕາມລະບຽບຂອງສະມາຄົມ. 2. **ກ** ເປັນຜູ້ອຳນວຍການ ຂອງບໍລິສັດ **ຂ**, ໃນໄລຍະທີ່ເປັນອຳນວຍການ **ກ** ໄດ້ເປີດເຜີຍ ຫຼື ຂາຍຂໍ້ມູນລັບຂອງບໍລິສັດ **ຂ** ໃຫ້ແກ່ບໍລິສັດ **ຄ** ທີ່ເປັນຄູ່ແຂ່ງ ການກະທຳຂອງ **ກ** ເປັນການລະເມີດກົດລະບຽບບໍລິສັດ ພາໃຫ້ບໍລິສັດໄດ້ຮັບຄວາມເສຍຫາຍຢ່າງຮ້າຍແຮງ, ສະພາບໍລິຫານຂອງ ບໍລິສັດຈຶ່ງລົງມະຕິປົດຜູ້ກ່ຽວຈາກການເປັນຜູ້ອຳນວຍການ. 3. **ກ** ໄດ້ເປັນປະທານສະພາບໍລິຫານ ບໍລິສັດ **ຂ** ດ້ວຍການບໍ່ຮຽກໂຮມ ສະມາຊິກຂາຮຸ້ນ ຄົບຕາມລະບຽບພາຍໃນບໍລິສັດ. 4. **ກ** ເປັນປະທານບໍລິສັດ ແລະ ປະສົບອຸບປະຕິເຫດ ພາໃຫ້ເສຍຄວາມ ສາມາດທາງດ້ານການປະພຶດ, ບໍລິສັດ ຈຳເປັນຕ້ອງໄດ້ເລືອກຕັ້ງເອົາ ປະທານບໍລິສັດຄົນໃໝ່ ຕາມກົດລະບຽບຂອງຕົນ. 5. **ກ** ເປັນປະທານບໍລິສັດ **ຂ,** ແຕ່ **ກ** ໄດ້ຖືກປະກາດເປັນບຸກຄົນລົ້ມ ລະລາຍ ຕາມຄຳຕັດສິນຂອງສານ **ກ** ຈຶ່ງພົ້ນຈາກການເປັນປະທານ ບໍລິສັດ **ຂ.** 6. **ກ** ເປັນປະທານບໍລິສັດ **ຂ** ມີອາຍຸການ 5 ປີ ຜູ້ກ່ຽວປະຕິບັດໜ້າທີ່ໄດ້ ສອງ ປີ ໄດ້ເສຍຊີວິດ, ກໍລະນີນີ້ ເປັນເຫດໃຫ້ຜູ້ກ່ຽວພົ້ນຈາກການແທນ ຂອງບໍລິສັດ. 7. **ກ** ເປັນປະທານບໍລິສັດ **ຂ** ມີອາຍຸການ 5 ປີ ຜູ້ກ່ຽວປະຕິບັດໜ້າທີ່ໄດ້ ສອງ ປີ ແລ້ວຜູ້ກ່ຽວເຈັບເປັນຈຶ່ງໄດ້ຂໍລາອອກ. 8. **ກ** ເປັນຜູ້ອຳນວຍການບໍລິສັດ **ຂ** ໄດ້ 2 ປີ ໃນເວລາດັ່ງກ່າວ **ກ** ໄດ້ຂາຍ ຮຸ້ນໃຫ້ **ຄ** ຈຶ່ງເຮັດໃຫ້ຖືຮຸ້ນບໍ່ເຖິງ 50 ເປີເຊັນ ຂອງຮຸ້ນທັງໝົດ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງຂຶ້ນໃໝ່ ເພື່ອກຳນົດໃຫ້ເຫັນກ່ຽວກັບກໍລະນີສະພາບທີ່ພາໃຫ້ ຕົວແທນຂອງນິຕິບຸກຄົນພົ້ນອອກຈາການເປັນຕົວແທນຂອງນິຕິບຸກຄົນ.

ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 122, 123 ແລະ 124 ຂອງກົດໝາຍວ່າດ້ວຍວິສາຫະກິດ ປີ 2013.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 115 ຄວາມຮັບຜິດຊອບຂອງນິຕິບຸກຄົນ

ນິຕິບຸກຄົນ ຕ້ອງມີຄວາມຮັບຜິດຊອບຕໍ່ການເຄື່ອນໄຫວ ຂອງຕົວແທນຂອງຕົນ. ຖ້າຕົວແທນ ຫາກເຄື່ອນໄຫວເກີນຂອບເຂດສິດອຳນາດຂອງຕົນ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນມາດຕາ 41 ຂອງ ປະມວນກົດໝາຍສະບັບນີ້.

ນິຕິບຸກຄົນ ຈະບໍ່ຮັບຜິດຊອບຕໍ່ການກະທຳຂອງສະມາຊິກຕົນທີ່ບໍ່ແມ່ນຕົວແທນ.

ນິຕິບຸກຄົນແຕ່ລະປະເພດ ມີຄວາມຮັບຜິດຊອບໃຊ້ແທນໜີ້ສິນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ທີ່ກ່ຽວຂ້ອງ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ ຂອບເຂດຄວາມຮັບຜິດຊອບຂອງນິຕິບຸກຄົນ ທີ່ເກີດຂຶ້ນຈາກ ການ ເຄື່ອນໄຫວທາງດ້ານນິຕິກຳ ແລະ ການກະທຳທີ່ບໍ່ຖືກຕ້ອງຕາມກົດໝາຍ ຂອງຕົວແທນຂອງຕົນ.
ຕົວຢ່າງ	1. **ກ** ເປັນຕົວແທນຂອງບໍລິສັດ **ຂ** ໄດ້ຮັບມອບໝາຍໃຫ້ໄປຊື້ລົດກັບບໍລິສັດ **ຄ** ຈຳນວນ 10 ຄັນ ເປັນເງິນຈຳນວນ 5.000.000.000 ກີບ ຕົວຈິງ **ກ** ໄດ້ໄປເຊັນສັນຍາຊື້ລົດຈຳນວນ 12 ຄັນ ມູນຄ່າ 5.500.000.000 ກີບ ຕໍ່ກັບສັນຍາດັ່ງກ່າວ ບໍລິສັດ **ຄ** ໄດ້ສົ່ງລົດເຂົ້າມາແລ້ວ ແຕ່ບໍລິສັດ **ຂ** ບໍ່ເອົາ ຈຳນວນທີ່ເກີນ 2 ຄັນ ຈຶ່ງເຮັດໃຫ້ບໍລິສັດ **ຄ** ມີຄວາມເສຍຫາຍ ໃນກໍລະນີ ດັ່ງກ່າວ ຖ້າບໍລິສັດ **ຂ** ບໍ່ເຫັນດີຮັບຜິດຊອບ **ກ** ເປັນຜູ້ຮັບຜິດຊອບ ຕໍ່ກັບ ຄວາມເສຍຫາຍທີ່ເກີດຈາກການເຄື່ອນໄຫວເກີນຂອບເຂດສິດອຳນາດ ທີ່ ໄດ້ຮັບມອບໝາຍ. 2. **ກ** ເປັນສະມາຊິກຂອງ ນິຕິບຸກຄົນ **ຂ** ໄດ້ເຮັດສັນຍາບໍລິການ ກັບ **ຄ** ໂດຍ ອ້າງວ່າຕົນເປັນຕົນແທນຂອງນິຕິບຸກຄົນ **ຂ** ຊຶ່ງ **ຄ** ບໍ່ໄດ້ສອບຖາມຂໍ້ມູນ ຢ່າງຈະແຈ້ງ ແລະ **ຄ** ກໍເຂົ້າໃຈວ່າ **ກ** ເປັນຕົວແທນຂອງນິຕິບຸກຄົນ **ຂ** ຈຶ່ງ ໄດ້ເຮັດສັນຍາບໍລິການກັບ **ກ** ໃນນາມນິຕິບຸກຄົນ ຖ້າ **ຂ** ປະຕິເສດ ຫຼື ບໍ່ ຮັບຮູ້ສັນຍາດັ່ງກ່າວກໍໄດ້ຍ້ອນບໍ່ເປັນຕົວແທນຂອງນິຕິບຸກຄົນ **ຂ.** 3. **ກ** ຜູ້ອຳນວຍການ ບໍລິສັດຮຸ້ນສ່ວນຈຳກັດ **ຂ** ມີທຶນຈົດທະບຽນ 1.000.000.000 ກີບ ແລະ **ກ** ຜູ້ອຳນວຍການບໍລິສັດ ຕາງໜ້າໃຫ້ ບໍລິສັດເຮັດສັນຍາກູ້ຢືມເງິນກັບ **ຄ** 200.000.000 ກີບ ແຕ່ບໍລິສັດ ຍັງ ມີການຂາດທຶນຢ່າງຕໍ່ເນື່ອງ ພາໃຫ້ບໍລິສັດມີໜີ້ສິນ ແລະ ລົ້ມລະລາຍ, ເຈົ້າ ໜີ້ **ຄ** ທວງເອົາຊັບສິນທັງໝົດຂອງບໍລິສັດ **ຂ** ໄດ້ພຽງແຕ່ 90.000.000 ກີບ, ສ່ວນທີ່ຍັງບໍ່ພໍ **ຄ** ບໍ່ມີສິດທວງຈາກບັນດາຜູ້ຖືຮຸ້ນ. ຍ້ອນເປັນນິຕິ ບຸກຄົນ ແລະ ເປັນບໍລິສັດຮຸ້ນສ່ວນຈຳກັດ.

ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງຂຶ້ນໃໝ່ ເພື່ອກຳນົດໃຫ້ເຫັນຄວາມຮັບຜິດຊອບຂອງນິຕິບຸກຄົນ ແລະ ຄວາມຮັບຜິດຊອບຂອງສະມາຊິກຂອງນິຕິບຸກຄົນ ຕໍ່ບຸກຄົນທີ່ສາມ ລວມ ມທັງການໃຊ້ແທນໜີ້ສິນຕາມປະເພດນິຕິບຸກຄົນ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 87 ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2015.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 116 ການປ່ຽນແປງນິຕິບຸກຄົນ

ນິຕິບຸກຄົນທີ່ໄດ້ຮັບການສ້າງຕັ້ງຂຶ້ນ ແລະ ຈົດທະບຽນຖືກຕ້ອງຕາມກົດໝາຍ ສາມາດປ່ຽນແປງດ້ວຍການຄວບເຂົ້າກັນ ຫຼື ແຍກອອກເປັນຫຼາຍນິຕິບຸກຄົນ ຕາມການຕົກລົງ ຫຼື ຕາມກົດລະບຽບຂອງນິຕິບຸກຄົນ ຫຼື ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍທີ່ກ່ຽວຂ້ອງ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ວ່ານິຕິບຸກຄົນກໍສາມາດປ່ຽນແປງດ້ວຍການຄວບເຂົ້າກັນ ຫຼື ແຍກອອກຈາກກັນ.
ຕົວຢ່າງ	ເບິ່ງຕາມຕົວຢ່າງມາດຕາ 117 ແລະ 118 ຂອງບົດອະທິບາຍປະມວນກົດໝາຍແພ່ງ
ເຫດຜົນໃນການສ້າງໃໝ່	ກຳນົດໄວ້ເປັນຫຼັກການລວມ ເພື່ອເປັນທິດທາງໃນການປ່ຽນແປງນິຕິບຸກຄົນ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 92 ຂອງປະມວນກົດໝາຍແພ່ງຫວຽດນາມ 2015.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 117 ການຄວບນິຕິບຸກຄົນ

ນິຕິບຸກຄົນ ສາມາດຄວບເຂົ້າກັນ ຕາມທີ່ໄດ້ກຳນົດໄວ້ໃນກົດລະບຽບຂອງຕົນ, ຕາມການຕົກລົງຂອງນິຕິບຸກຄົນທີ່ຈະຄວບເຂົ້າກັນນັ້ນ ແລະ ຕາມການອະນຸຍາດຂອງພາກສ່ວນກ່ຽວຂ້ອງ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ວ່າຫຼາຍນິຕິບຸກຄົນສາມາດຄວບເຂົ້າກັນເປັນນິຕິບຸກຄົນໜຶ່ງ ພ້ອມທັງຮັບຮູ້ສິດ ແລະ ພັນທະຂອງນິຕິບຸກຄົນເກົ່າ ແລະ ໃໝ່ສິ້ນສຸດລົງ ແລະ ເລີ່ມຕົ້ນໃນເວລາໃດ.
ຕົວຢ່າງ	ບໍລິສັດ **ກ**, **ຂ** ແລະ **ຄ** ບໍລິສັດທັງສາມໄດ້ຕົກລົງຄວບສາມບໍລິສັດເຂົ້າກັນເປັນບໍລິສັດຈຳກັດ ໜຶ່ງດຽວ ເພື່ອດຳເນີນກິດຈະການຫຼາຍອັນເຊັ່ນ ນຳເຂົ້າລົດ, ອາຫານເປັນຕົ້ນ ຊຶ່ງໄດ້ຂຶ້ນທະບຽນວິສາຫະກິດໃໝ່ ໂດຍໃສ່ຊື່ໃໝ່ເອີ້ນວ່າ: ບໍລິສັດຂາເຂົ້າ **ກຂຄ** ຈຳກັດ.

ເຫດຜົນໃນການສ້າງໃໝ່	ກຳນົດໄວ້ເປັນຫຼັກການລວມ ເພື່ອເປັນທິດທາງໃນການຄວບນິຕິບຸກຄົນ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 88 ແລະ 89 ຂອງປະມວນແພ່ງຫວຽດນາມ ປີ 2015.
ມາດຕາອ້າງອີງ	ມາດຕາ 164 ຂອງກົດໝາຍວ່າດ້ວຍວິສາຫະກິດ ປີ 2014.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 118 ການແຍກນິຕິບຸກຄົນ

ນິຕິບຸກຄົນ ສາມາດຄວບເຂົ້າກັນ ຕາມທີ່ໄດ້ກຳນົດໄວ້ໃນກົດລະບຽບຂອງຕົນ, ຕາມການຕົກລົງຂອງນິຕິບຸກຄົນທີ່ຈະຄວບເຂົ້າກັນນັ້ນ ແລະ ຕາມການອະນຸຍາດຂອງພາກສ່ວນກ່ຽວຂ້ອງ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ວ່ານິຕິບຸກຄົນໜຶ່ງສາມາດແຍກອອກເປັນຫຼາຍນິຕິບຸກຄົນ ຕາມກົດລະບຽບຂອງນິຕິບຸກຄົນນັ້ນ ແລະ ຕາມການອະນຸຍາດຂອງພາກສ່ວນກ່ຽວຂ້ອງຂອງລັດ.
ຕົວຢ່າງ	**ຂ** ໄດ້ແຍກອອກຈາກບໍລິສັດ **ກ,** ບໍລິສັດ **ຂ** ໄດ້ມີກົດລະບຽບເປັນຂອງຕົນເອງ ແລະ ໄດ້ຮັບອະນຸຍາດຈາກພາກສ່ວນທີ່ກ່ຽວຂ້ອງຂອງລັດ ມີຄວາມເປັນເອກະລາດໃນການດຳ ເນີນທຸລະກິດຂອງຕົນ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງໃໝ່ ເພື່ອກຳນົດໄວ້ເປັນຫຼັກການລວມ ກ່ຽວກັບການແຍກນິຕິບຸກຄົນ ອອກເປັນຫຼາຍນິຕິບຸກຄົນ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 90 ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2015.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 119 ການຍຸບເລີກນິຕິບຸກຄົນ

ນິຕິບຸກຄົນ ອາດຖືກຍຸບເລີກ ຕາມກໍລະນີໃດໜຶ່ງ ດັ່ງນີ້:

1. ມີພື້ນຖານໃດໜຶ່ງ ທີ່ພາໃຫ້ຍຸບເລີກຕາມທີ່ໄດ້ກຳນົດໄວ້ໃນກົດລະບຽບຂອງຕົນ;
2. ໄດ້ບັນລຸວັດຖຸປະສົງຂອງນິຕິບຸກຄົນ ຫຼື ບໍ່ສາມາດດຳເນີນງານຕໍ່ໄປໄດ້;
3. ຖືກລົ້ມລະລາຍຕາມຄຳຕັດສິນຂອງສານ;
4. ຖືກຍຸບເລີກຕາມຄຳຕັດສິນຂອງສານ;
5. ມີກໍລະນີອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ພື້ນຖານທີ່ພາໃຫ້ມີການຍຸບເລີກ ນິຕິບຸກຄົນ ຕາມແຕ່ລະກໍລະນີ.
ຕົວຢ່າງ	1. **ກ** ແລະ **ຂ** ໄດ້ໂຮມກັນສ້າງຕັ້ງເປັນມູນນິທິ **ຄ** ເພື່ອຊ່ວຍເຫຼືອເດັກທີ່ຂາດຄວາມສາມາດທາງດ້ານການປະພຶດ, ຜ່ານການດຳເນີນກິດຈະການ

	ກ ແລະ **ຂ** ໄດ້ນຳໃຊ້ທຶນທີ່ໄດ້ຮັບບໍລິຈາກ ຈາກສັງຄົມ ເພື່ອເປັນການຫາລາຍໄດ້ ແລະ ສ້າງຜົນປະໂຫຍດໃຫ້ແກ່ຕົນເອງ ຊຶ່ງເຫັນວ່າ **ກ** ແລະ **ຂ** ໄດ້ດຳເນີນກິດຈະການ ຜິດຈາກຈຸດປະສົງຂອງມູນນິທິ ຈຶ່ງເຮັດໃຫ້ພາກສ່ວນທີ່ກ່ຽວຂ້ອງຖອນໃບອະນຸຍາດ. 2. ບໍລິສັດກໍ່ສ້າງຂົວທາງ **ກ** ທີ່ມີໃບອະນຸຍາດຖືກຕ້ອງຕາມກົດໝາຍ ຜ່ານການດຳເນີນທຸລະກິດມາເປັນເວລາ ຫ້າປີ ບໍລິສັດມີໜີ້ສິນຢ່າງຫຼວງຫຼາຍ ບໍສາມາດດຳເນີນທຸລະກິດໄປຕໍ່ໄດ້ ສານຈຶ່ງໄດ້ຕັດສິນໃຫ້ **ກ** ເປັນບໍລິສັດທີ່ລົ້ມລະລາຍ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງຂຶ້ນໃໝ່ເພື່ອເປັນບ່ອນອີງໃຫ້ແກ່ບັນດາອົງການທີ່ກ່ຽວຂ້ອງໃນການພິຈາ ລະນາກ່ຽວບັນຫາການຍຸບເລີກນິຕິບຸກຄົນ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 93 ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2015.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 120 ການຊຳລະສະສາງ

ເມື່ອນິຕິບຸກຄົນ ໄດ້ຖືກຍຸບເລີກ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 119 ຂອງປະມວນກົດໝາຍສະບັບນີ້ ຕ້ອງຊຳລະສະສາງໃຫ້ສຳເລັດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ກ່ຽວກັບຄວາມຮັບຜິດຊອບຂອງນິຕິບຸກຄົນ ພາຍຫຼັງຖືກຍຸບເລີກແລ້ວ ຍັງຕ້ອງສືບຕໍ່ປະຕິບັດສິດ ແລະ ພັນທະຂອງຕົນ.
ຕົວຢ່າງ	ບໍລິສັດ **ກ** ໄດ້ກູ້ຢືມເງິນນຳທະນາຄານ **ຂ** ແລະ **ຄ** ເພື່ອດຳເນີນທຸລະກິດ, ຜ່ານການດຳເນີນການຂອງ **ກ** ມີຫຼາຍຢ່າງຂັດກັບວັດຖຸປະສົງຂອງກົດລະບຽບພາຍໃນຂອງ **ກ** . ສານຈຶ່ງຕັດສິນໃຫ້ **ກ** ຍຸບເລີກ ພາຍຫຼັງທີ່ **ກ** ຖືກຍຸບເລີກແລ້ວ, ຍັງຕ້ອງໄດ້ແຕ່ງຕັ້ງຜູ້ຮັບຜິດຊອບ ຮວບຮວມໜີ້ຕ້ອງຮັບ, ໜີ້ຕ້ອງສົ່ງ ແລະ ສ້າງບັນຊີຊັບສິນ ເພື່ອກຳນົດ ການຊຳລະໜີ້ສິນໃຫ້ແກ່ທະນາຄານ **ຂ** ແລະ **ຄ** ໃຫ້ສຳເລັດ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງຂຶ້ນໃໝ່ເພື່ອເປັນບ່ອນອີງໃຫ້ແກ່ບັນດາອົງການທີ່ກ່ຽວຂ້ອງ ໃນການພິຈາ ລະນາກ່ຽວບັນຫາການຊຳລະສະສາງໜີ້ສິນຂອງນິຕິບຸກຄົນ ໃນກໍລະມີການລົ້ມລະລາຍ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 66 ຂອງປະມວນກົດໝາຍກຳປູເຈຍ; ມາດຕາ 94 ຂອງປະມວນກົດໝາຍແພ່ງຫວຽດນາມປີ 2015.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ຂ. ສະມາຄົມ

ມາດຕາ 121 ສະມາຄົມ

ສະມາຄົມ ແມ່ນ ການຈັດຕັ້ງທາງສັງຄົມ ທີ່ສ້າງຕັ້ງຂຶ້ນດ້ວຍຄວາມສະໝັກໃຈ, ບໍ່ຫາລາຍໄດ້ ຫຼື ຜົນກຳໄລມາແບ່ງປັນກັນ ແລະ ເຄື່ອນໄຫວຢ່າງເປັນປະຈຳ ເພື່ອປົກປ້ອງສິດ ແລະ ຜົນປະ�โຫຍດອັນຊອບທຳຂອງສະມາຄົມ, ສະມາຊິກຕົນ ຫຼື ຂອງຊຸມຊົນ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ກ່ຽວກັບການສ້າງຕັ້ງ ແລະ ການເຄື່ອນໄຫວ ເພື່ອປົກປ້ອງສິດ ແລະ ຜົນປະ�โຫຍດ ຂອງສາມາຄົມ, ສາມາຊິກ ຫຼື ຊຸມຊົນຂອງຕົນ ໂດຍບໍ່ຫາລາຍໄດ້ ຫຼື ຜົນປະ�โຫຍດມາແບ່ງປັນກັນ.
ຕົວຢ່າງ	**ກ** ແລະ **ຂ** ມີຄວາມສະໝັກໃຈສ້າງຕັ້ງສະມາຄົມ **ຄ** ເພື່ອຊ່ວຍເຫຼືອຊາວບ້ານ **ງ** ໃນເວລາເກີດໄພພິບັດ ເຊັ່ນ ນ້ຳຖ້ວມ, ເກີດອັກຄີໄພ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກມາດຕາ 2 ຂອງດຳລັດວ່າດ້ວຍສະມາຄົມ ປີ 2017 ດຳລັດຂອງສະມາຄົມ ບໍ່ໄດ້ກຳນົດນິຍາມກ່ຽວກັບ ມີພຽງແຕ່ອະທິບາຍຄຳສັບ ຂອງສະມາຄົມ ປະມວນກົດໝາຍແພ່ງ ຈຶ່ງໄດ້ກຳນົດນິຍາມ ຂອງສະມາຄົມ ໃຫ້ຈະແจ້ງ ທັງນີ້ກໍເພື່ອສະດວກໃຫ້ແກ່ພາກສ່ວນທີ່ກ່ຽວຂ້ອງກວດກາໄດ້ງ່າຍ ສະມາຄົມ ກໍເປັນນິຕິບຸກຄົນ ໜຶ່ງທີ່ມີສາຍພົວພັນທາງແພ່ງເຊັ່ນກັນ ຈຶ່ງໄດ້ກຳນົດເອົາສະມາຄົມ ເຂົ້າໄວ້ໃນປະມວນກົດໝາຍແພ່ງເພື່ອເປັນລະບົບດຽວກັນ ແລະ ບັນດາປະເທດອື່ນ ກໍໄດ້ກຳນົດສະມາຄົມເຂົ້າໃນປະມວນກົດໝາຍແພ່ງ ເຊັ່ນກັນ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 33 ວັກ 2 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 2 ຂອງດຳລັດວ່າດ້ວຍ ສະມາຄົມ; ມາດຕາ 105 ຂໍ້ 1 ແລະ 106 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 122 ຖານະນິຕິບຸກຄົນຂອງສະມາຄົມ

ສະມາຄົມ ທີ່ໄດ້ຮັບການສ້າງຕັ້ງຂຶ້ນ ຕາມປະມວນກົດໝາຍສະບັບນີ້ ຫຼື ກົດໝາຍອື່ນ ມີ ຖານະເປັນນິຕິບຸກຄົນ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ເຖິງ ສະມາຄົມ ທີ່ໄດ້ຮັບອະນຸຍາດ ຖືກຕ້ອງຕາມກົດໝາຍ ກໍ ມີຖານະເປັນນິຕິບຸກຄົນ.
ຕົວຢ່າງ	**ກ,ຂ** ແລະ **ຄ** ໄດ້ຮັບອະນຸຍາດ ສ້າງຕັ້ງສະມາຄົມກູ້ໄພ **ງ** ເພື່ອຊ່ວຍເຫຼືອຄົນ ເຈັບໃນເວລາເກີດອຸບປະຕິເຫດຕ່າງໆ ສະມາຄົມກູ້ໄພດັ່ງກ່າວເປັນນິຕິບຸກຄົນ ໜຶ່ງ.

ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກດຳລັດຂອງສະມາຄົມຍ້ອນວ່າ ໃນປັດຈຸບັນກໍຄືໄລຍະຜ່ານມາຍັງມີຫຼາຍສະມາຄົມທີ່ກໍ່ຕັ້ງຂຶ້ນທີ່ບໍ່ມີຖານະນິຕິບຸກຄົນແຕ່ເຄື່ອນໄຫວຄືກັບນິຕິ ບຸກຄົນ. ສະນັ້ນ, ເປັນວິທີແກ້ໄຂບັນຫາທີ່ເກີດຂຶ້ນໃນລະຍະຜ່ານມາ ທັ້ງນີ້ກໍເພື່ອເຮັດໃຫ້ຜູ້ລິເລີ່ມກໍ່ຕັ້ງສະມາຄົມນັ້ນໄດ້ຮູ້ ແລະ ເຂົ້າໃຈກ່ຽວກັບຖານະນິຕິບຸກຄົນຂອງສະມາຄົມທີ່ຖືກຕ້ອງຕາມກົດໝາຍ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ໃນກໍລະນີ ທີ່ຜ່ານການສຳຫຼວດ ແລະ ຄົ້ນຄວ້າແລ້ວບໍ່ສາມາດຫາຂໍ້ມູນປະມວນກົດແພ່ງຂອງປະເທດອື່ນ ທີ່ມີເນື້ອກ່ຽວຂ້ອງກັບມາດຕານີ້ໄດ້.
ມາດຕາອ້າງອີງ	ມາດຕາ 2 ຂອງດຳລັດວ່າດ້ວຍ ສະມາຄົມ; ມາດຕາ 102 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 123 ປະເພດ ແລະ ຂອບເຂດການເຄື່ອນໄຫວຂອງສະມາຄົມ

ປະເພດ ຂອງສະມາຄົມ ມີດັ່ງນີ້:

1. ສະມາຄົມດ້ານເສດຖະກິດ;
2. ສະມາຄົມດ້ານວິຊາຊີບ, ເຕັກນິກວິຊາການ ແລະ ການປະດິດຄິດແຕ່ງ;
3. ສະມາຄົມດ້ານສັງຄົມສົງເຄາະ ແລະ ອື່ນໆ.

ສະມາຄົມ ມີຂອບເຂດການເຄື່ອນໄຫວ ດັ່ງນີ້:

1. ສະມາຄົມທີ່ເຄື່ອນໄຫວໃນຂອບເຂດທົ່ວປະເທດ;
2. ສະມາຄົມທີ່ເຄື່ອນໄຫວ ໃນຂອບເຂດແຂວງ, ນະຄອນຫຼວງ;
3. ສະມາຄົມທີ່ເຄື່ອນໄຫວໃນຂອບເຂດເມືອງ, ເທດສະບານ, ນະຄອນ;
4. ສະມາຄົມທີ່ເຄື່ອນໄຫວໃນຂອບເຂດບ້ານ.

ສະມາຄົມ ສາມາດມີສາຂາ ຫຼື ຫ້ອງການຜູ້ຕາງໜ້າ ຕາມຂອບເຂດທີ່ໄດ້ຮັບອະນຸຍາດ.

ຈຸດປະສົງ	ເພື່ອໃຫ້ຮັບຮູ້ເຖິງປະເພດຂອງສະມາຄົມ ແລະ ຂອບການເຄື່ອນໄຫວຂອງສະມາຄົມ.
ຕົວຢ່າງ	**1. ສະມາຄົມດ້ານເສດຖະກິດເຄື່ອນໄຫວໃນຂອບເຂດບ້ານ:** **ກ, ຂ** ແລະ **ຄ** ຕົກລົງກັນສ້າງຕັ້ງສະມາຄົມ ເພື່ອໃຫ້ຄວາມຮູ້ແກ່ປະຊາຊົນພາຍໃນບ້ານ **ງ** ເມືອງ **ຈ,** ແຂວງ **ສ** ໃນການປູກຜັກ, ລ້ຽງໄກ່ໄຂ່ ແລະ ລ້ຽງປາ ເພື່ອສົ່ງຂາຍ. **2. ສະມາຄົມດ້ານວິຊາຊີບ, ເຕັກນິກວິຊາການ ແລະ ການປະດິດຄິດແຕ່ງໃນຂອບເຂດເມືອງ, ເທດສະບານ, ນະຄອນ:** **ກ** ແລະ **ຂ** ໄດ້ສ້າງຕັ້ງສະມາຄົມ **ຄ** ສະຖານທີ່ສອນການແກະສະລັກໄມ້ ແລະ ການ ສານຕີບເຂົ້າ ໃຫ້ເປັນອາຊີບແກ່ຊາວບ້ານຕ່າງໆ ໃນເມືອງ **ຈ,** ແຂວງ **ສ.** **3. ສະມາຄົມດ້ານສັງຄົມສົງເຄາະ ທີ່ເຄື່ອນໄຫວໃນຂອບເຂດທົ່ວປະເທດ:** **ກ** ແລະ **ຂ** ສ້າງຕັ້ງສະມາຄົມ **ຄ** ປະຈຳຢູ່ແຂວງ **ງ** ເຮັດຂາທຽມເພື່ອຊ່ວຍເຫຼືອຄົນພິການໃນທົ່ວ ສປປ ລາວ.

ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກດຳລັດຂອງສະມາຄົມ ໃນດຳລັດຂອງສະມາຄົມໄດ້ກຳນົດກ່ຽວກັບປະເພດ ແລະ ລະດັບຂອງສາມະຄົມແຍກອອກເປັນສອງ ມາດຕາ, ແຕ່ຢູ່ໃນປະມວນກົດໝາຍແພ່ງ ແມ່ນໄດ້ກຳເປັນມາດຕາດຽວ ເນື່ອງ ຈາກວ່າ ປະເພດ ແລະ ລະດັບຂອງການເຄື່ອນໄຫວຂອງສະມາຄົມແມ່ນພົວ ກັນເຊັ່ນ ປະເພດສະມາຄົມດ້ານວິຊາຊີບນັ້ນ ແມ່ນເຄື່ອນໄຫວຢູ່ໃນຂອບເຂດ ລະດັບໃດ, ລະດັບປະເທດ ຫຼື ລະດັບແຂວງ; ທັ້ງນີ້ກໍເພື່ອໃຫ້ຜູ້ອ່ານ ຫຼື ນຳໃຊ້ ກົດໝາຍເຂົ້າໃຈ ແລະ ສາມາດຈັດຕັ້ງປະຕິບັດໄດ້ງ່າຍ.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງ ຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 7, 8 ແລະ ມາດຕາ 12 ຂອງດຳລັດວ່າດ້ວຍສະມາຄົມ; ມາດຕາ 131 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 124 ເງື່ອນໄຂການສ້າງຕັ້ງສະມາຄົມ

ການສ້າງຕັ້ງສະມາຄົມ ຕ້ອງມີເງື່ອນໄຂຄົບຖ້ວນ ດັ່ງນີ້:

1. ມີຈຸດປະສົງບໍ່ຂັດກັບ ລັດຖະທຳມະນູນ, ກົດໝາຍ, ລະບຽບການ ແລະ ຮີດຄອງປະເພນີ ອັນດີງາມຂອງຊາດ, ຂອງທ້ອງຖິ່ນ ແລະ ເຜົ່າຕ່າງໆ; ບໍ່ເປັນໄພອັນຕະລາຍຕໍ່ ຄວາມໝັ້ນຄົງຂອງຊາດ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ແລະ ສິດເສລີພາບຂອງບຸກຄົນ;
2. ມີຜູ້ລິເລີ່ມ ຊຶ່ງແມ່ນບຸກຄົນ ຫຼື ນິຕິບຸກຄົນ ທີ່ມີຄວາມສາມາດທາງດ້ານການປະພຶດ ຕາມທີ່ ໄດ້ກຳນົດໄວ້ໃນປະມວນກົດໝາຍສະບັບນີ້;
3. ມີກົດລະບຽບ, ມີໂຄງປະກອບການຈັດຕັ້ງ, ມີສຳນັກງານ ແລະ ຊັບສິນ ເພື່ອຮັບປະກັນ ບັນລຸຈຸດປະສົງຂອງສະມາຄົມທີ່ວາງໄວ້;
4. ມີຈຳນວນສະມາຊິກທີ່ໄດ້ລົງທະບຽນດ້ວຍຄວາມສະໝັກໃຈ ເຂົ້າຮ່ວມເຄື່ອນໄຫວໃນ ສະມາ ຄົມຢ່າງຄົບຖ້ວນ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ເງື່ອນໄຂທາງດ້ານເນື້ອໃນຂອງການສ້າງຕັ້ງສະມາຄົມ, ສຳລັບ ເງື່ອນໄຂກ່ຽວກັບການດຳເນີນຈະກຳນົດໄວ້ໃນມາດຕາຕໍ່ໄປ.
ຕົວຢ່າງ	1. **ກ** ແລະ **ຂ** ໄດ້ສ້າງຕັ້ງສະມາຄົມ ຊ່ວຍເຫຼືອຄົນພິການ **ຄ**, ໂດຍຖືກຕ້ອງ ແລະ ໄດ້ຮັບອະນຸຍາດຈາກພາກສ່ວນທີ່ກ່ຽວຂ້ອງຕາມກົດໝາຍ ແລະ ລະບຽບການ; 2. **ກ** ອາຍຸ 35 ປີ ແລະ **ຂ** ອາຍຸ 25 ປີ ທັງສອງໄດ້ສ້າງຕັ້ງສະມາຄົມຊ່ວຍເຫຼືອ ຄົນພິການ **ຄ**, **ກ** ແລະ **ຂ** ມີຄວາມສາມາດທາງດ້ານການປະພຶດ ໃນການ ເຄື່ອນໄຫວເຂົ້າຮ່ວມ ເຮັດສັນຍາສ້ອມແປງຫ້ອງການຂອງສະມາຄົມ ກັບ ບໍລິສັດສ້ອມແປງໃດໜຶ່ງ. 3. ສະມາຄົມ **ຄ** ປະກອບມີ ປະທານ **1** ທ່ານ, ຮອງປະທານ 2 ທ່ານ ແລະ ມີພະນັກງານຊ່ວຍວຽກທັງໝົດມີ 10 ທ່ານ ມີສຳນັກງານຕັ້ງຢູ່ບ້ານ **ງ**, ເມືອງ **ຈ**, ແຂວງ **ສ** ຊຶ່ງມີຊັບສິນ ແລະ ລະບຽບການເຄື່ອນໄຫວຂອງ ສະມາຄົມ.

	4. ສະມາຄົມ **ຄ** ປະກອບມີ ສະມາຊິກສາມັນ ຈຳນວນ 10 ຄົນ, ສະມາຊິກ ສະໜັບສະໜູນ ຈຳນວນ 20 ຄົນ ແລະ ສະມາຊິກກິດຕິມະສັກ ຈຳນວນ 5 ຄົນ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກມາດຕາ 6 ຂອງດຳລັດສະມາຄົມ ຊຶ່ງຢູ່ໃນດຳລັດໄດ້ກຳນົດ 7 ເງື່ອນໄຂ ຂອງການສ້າງຕັ້ງສະມາຄົມ ເນື່ອງຈາກວ່າ ລະບຽບການ, ຂັ້ນຕອນໃນການກໍ່ຕັ້ງສະມາຄົມ ທີ່ກຳນົດໃນດຳລັດຂອງສະມາຄົມ ແມ່ນກຳນົດສະເພາະແຕ່ລະເງື່ອນໄຂ ແຕ່ໃນປະມວນແພ່ງຈະກຳນົດເອົາຫຼັກອັນເປັນພື້ນຖານກ່ຽວກັບເງື່ອນໄຂຂອງການສ້າງຕັ້ງສະມາຄົມໄວ້ ເພື່ອເຮັດໃຫ້ຜູ້ທີ່ຈະສ້າງຕັ້ງສະມາຄົມ ໄດ້ຮູ້, ໄດ້ເຂົ້າໃຈ ແລະ ນຳໄປຈັດຕັ້ງຜັນຂະຫຍາຍໄດ້ງ່າຍຂຶ້ນ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 7 ຂອງດຳລັດວ່າດ້ວຍ ສະມາຄົມ ປີ 2017; ມາດຕາ 67, 104 ແລະ 108 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 125 ການຂໍສ້າງຕັ້ງ ສະມາຄົມ

ການຂໍສ້າງຕັ້ງສະມາຄົມ ໃຫ້ປະຕິບັດຕາມເງື່ອນໄຂ, ລະບຽບການ ແລະ ຂັ້ນຕອນ ທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ເຖິງຂະບວນການ ໃນການດຳເນີນການສ້າງຕັ້ງສະມາຄົມ.
ຕົວຢ່າງ	**ກ** ປະທານບໍລິສັດອະສັງຫາລິມະຊັບ **ຂ** ມີຈຸດປະສົງສ້າງຕັ້ງສະມາຄົມຊ່ວຍເຫຼືອຄົນພິ ການຊື່ວ່າ "**ສະມາຄົມຟ້າສະຫວ່າງ**" ຊຶ່ງການຂໍສ້າງຕັ້ງສະມາຄົມ ແມ່ນອີງໃສ່ຂັ້ນຕອນດັ່ງນີ້: 1. ການສະເໜີຮັບຮອງການແຕ່ງຕັ້ງຄະນະຂົນຂວາຍ; 2. ການສະເໜີຂໍເປີດກອງປະຊຸມສ້າງຕັ້ງສະມາຄົມ; 3. ການສະເໜີຂໍຮັບຮອງເອົາກົດລະບຽບ ແລະ ຄະນະບໍລິຫານສະມາຄົມ; 4. ການສະເໜີຈົດທະບຽນສະມາຄົມ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກມາດຕາ 13 ແລະ 16 ຂອງດຳລັດສະມາຄົມ ກຳນົດເຂົ້າໃນປະມວນກົດໝາຍແພ່ງ.
ຂໍມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 13 ແລະ 16 ຂອງດຳລັດວ່າດ້ວຍສະມາຄົມ ປີ 2017; ມາດຕາ 108 ແລະ 124 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 126 ກົດລະບຽບຂອງສະມາຄົມ

ສະມາຄົມຕ້ອງມີກົດລະບຽບ ຊຶ່ງປະກອບດ້ວຍຊື່ຂອງສະມາຄົມ ແລະ ເນື້ອໃນອື່ນ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 108 ຂອງປະມວນກົດໝາຍສະບັບນີ້ ແລະ ລະບຽບການທີ່ກ່ຽວຂ້ອງ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ເນື້ອໃນສຳຄັນ ຢູ່ໃນກົດລະບຽບຂອງສະມາຄົມ.
ຕົວຢ່າງ	**ກ** ແລະ **ຂ** ສ້າງຕັ້ງສະມາຄົມ ຢູ່ທີ່ແຂວງ **ຈ**, ຊຶ່ງມີກົດລະບຽບພາຍໃນຂອງສະມາຄົມ ເຊັ່ນ ຊື່ສະມາຄົມ **ຄ**, ມີຈຸດປະສົງເພື່ອສົ່ງເສີມ ແລະ ອະນຸລັກໜັງສືທຳໃບລານ, ໂຄງປະກອບການຈັດຕັ້ງ ແລະ ຂອບເຂດການເຄື່ອນໄຫວ ແລະ ເນື້ອໃນຕົ້ນຕໍອື່ນ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງຂຶ້ນໃໝ່ເນື່ອງຈາກວ່າໃນດຳລັດວ່າດ້ວຍການສ້າງຕັ້ງສະມາຄົມ ບໍ່ໄດ້ກຳ ນົດລາຍລະອຽດ ກ່ຽວກັບເນື້ອໃນຕົ້ນຕໍກົດລະບຽບຂອງສະມາຄົມ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 108 ແລະ 124 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 127 ໂຄງປະກອບການຈັດຕັ້ງ ແລະ ການຄຸ້ມຄອງບໍລິຫານຂອງສະມາຄົມ

ສະມາຄົມ ຕ້ອງມີໂຄງປະກອບການຈັດຕັ້ງຂອງຕົນ.

ໂຄງປະກອບການຈັດຕັ້ງ ແລະ ການຄຸ້ມຄອງບໍລິຫານຂອງສະມາຄົມ ໄດ້ກຳນົດໄວ້ໃນກົດລະບຽບຂອງສະມາຄົມ ຫຼື ຂໍ້ຕົກລົງສ້າງຕັ້ງສະມາຄົມ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ກ່ຽວກັບ ສະມາຄົມກໍແມ່ນນິຕິບຸກຄົນເຊັ່ນດຽວກັນ ໂຄງປະກອບການ ຈັດຕັ້ງ ແລະ ການເຄື່ອນໄຫວຂອງສະມາຄົມ ໄດ້ກຳນົດໄວ້ໃນກົດລະບຽບຂອງຕົນ ຫຼືຂໍ້ຕົກລົງສ້າງຕັ້ງສະມາຄົມ.
ຕົວຢ່າງ	1. **ກ** ແລະ **ຂ** ຕ້ອງການສ້າງສະມາຄົມໃດໜຶ່ງຂຶ້ນ ຕ້ອງໄດ້ສ້າງໂຄງປະກອບການຈັດຕັ້ງຂອງຕົນເອງຂຶ້ນເຊັ່ນ: ຄະນະບໍລິຫານງານ, ຄະນະກວດກາ, ເລຂາທິ ການ, ບຸກຄະລາກອນຕ່ຳແໜ່ງງານອື່ນໆ ແລະ ສະມາຊິກ. 2. ສະມາຄົມ **ສ** ໄດ້ຕົກລົງໃຫ້ມີຄະນະບໍລິຫານປະກອບມີ ສາມ ຄົນ ຊຶ່ງໃນ ສາມ ຄົນນັ້ນ ຈະເປັນຜູ້ຄຸ້ມຄອງບໍລິຫານ ແລະ ຕົວແທນໃຫ້ແກ່ສະມາຄົມໃນການຕັດສິນໃຈບັນຫາຕ່າງໆຂອງສະມາຄົມ. ແຕ່ໃນກໍລະນີຫາກເປັນການຕັດສິນໃຈທີ່ມີຄວາມສຳຄັນຂອງສະມາຄົມ ຕ້ອງໄດ້ຄັດເລືອກເອົາຜູ້ຄະນະບໍລິຫານຄົນໃໝ່ດ້ວຍການລົງຄະແນນສຽງ ຂອງສະມາຊິກ.

ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກຕາມມາດຕາ 32 ແລະ 33 ຂອງດຳລັດຂອງສະມາຄົມ ຊຶ່ງໄດ້ກຳນົດແຕ່ລະໂຄງປະກອບຂອງບຸກຄະລາກອນໃນສະມາຄົມນັ້ນ ແຕ່ປະມ່ວນກົດໝາຍແພ່ງ ຈະກຳນົດຫຼັກພື້ນຖານກ່ຽວກັບໂຄງປະກອບ ແລະ ການຄຸ້ມຄອງຂອງສະມາຄົມ ເພື່ອເປັນບ່ອນອີງໃຫ້ແກ່ຜູ້ສ້າງຕັ້ງສະມາຄົມໃນການກຳນົດຄະນະບໍລິຫານງານ, ກວດກາ ແລະ ການກຳນົດບຸກຄະລາກອນໃນແຕ່ລະຕຳແໜ່ງງານໃຫ້ມີຄວາມ ເໝາະສົມກັບຄວາມຮຽກຮ້ອງ ຕ້ອງການຂອງສະມາຄົມ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 32 ແລະ 33 ຂອງດຳລັດວ່າດ້ວຍ ສະມາຄົມ; ມາດຕາ 111 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 128 ກອງປະຊຸມໃຫຍ່ ຂອງສະມາຄົມ

ກອງປະຊຸມໃຫຍ່ຂອງສະມາຄົມ ແມ່ນການຈັດຕັ້ງສູງສຸດຂອງສະມາຄົມ ຊຶ່ງເປີດຂຶ້ນຕາມທີ່ໄດ້ກຳນົດໄວ້ໃນກົດລະບຽບຂອງສະມາຄົມທີ່ກ່ຽວຂ້ອງ.

ຈຸດປະສົງ	ເພື່ອໃຫ້ຮັບຮູ້ເຖິງກອງປະຊຸມໃຫຍ່ຂອງສະມາຄົມ ແມ່ນອົງການບໍລິຫານ ສູງສຸດ ຂອງ ສະມາຄົມ.
ຕົວຢ່າງ	ສະມາຄົມ **ກ** ໄດ້ຈັດກອງປະຊຸມໃຫຍ່ປະຈຳປີ, ໃນກົດລະບຽບ ໄດ້ກຳນົດໃຫ້ສະມາຊິກສາມາດເຂົ້າຮ່ວມຮ່ວມກອງປະຊຸມໃຫຍ່ດ້ວຍຕົນເອງ ຫຼື ສົ່ງຕົວແທນເຂົ້າຮ່ວມກໍໄດ້ ແລະ ກອງປະຊຸມໃຫຍ່ປະຈຳປີ ເປີດຂຶ້ນໂດຍມີສະມາຊິກສາມັນເຂົ້າຮ່ວມຫຼາຍກວ່າເຄິ່ງໜຶ່ງ ຂອງສະມາຊິກສະມັນທັງໝົດ. ການຕົກລົງ ຫຼື ຕັດສິນບັນຫາຂອງສະມາຄົມໃຫ້ຖືເອົາຕາມສຽງສ່ວນຫຼາຍຂອງສະມາຊິກທີ່ເຂົ້າຮ່ວມກອງປະຊຸມໃຫຍ່ທັງໝົດ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກມາດຕາ 43 ຂອງດຳລັດຂອງສະມາຄົມ ຊຶ່ງໃນມາດຕານີ້ໄດ້ກຳນົດພຽງ ແຕ່ຫຼັກລວມຂອງກອງປະຊຸມໃຫຍ່ຂອງສະມາຄົມ ສ່ວນລາຍລະອຽດແມ່ນໄດ້ກຳນົດ ໄວ້ໃນນິຕິກຳເປັນຕົ້ນ ດຳລັດຂອງສະມາຄົມ ຫຼື ກົດລະບຽບຂອງສະມາຄົມ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 43 ຂອງດຳລັດວ່າດ້ວຍ ສະມາຄົມ ປີ 2011.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 129 ການຄອບ, ການແຍກ ແລະ ການຍຸບເລີກສະມາຄົມ

ການຄອບ, ການແຍກ ແລະ ການຍຸບເລີກສະມາຄົມ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນ ມາດ ຕາ 117, 118 ແລະ 119 ຂອງປະມວນກົດໝາຍສະບັບນີ້.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ເຖິງຮູບແບບ ແລະ ລະບຽບຂອງການຄອບ, ການແຍກ ແລະ ກໍລະນີຂອງການຍຸບເລີກຂອງສະມາຄົມ
ຕົວຢ່າງ	1. ການຄອບສະມາຄົມໃຫ້ເບິ່ງຕົວຢ່າງມາດຕາ 117 ຂອງບົດອະທິບາຍປະມວນກົດໝາຍແພ່ງ; 2. ການແຍກສະມາຄົມໃຫ້ເບິ່ງຕົວຢ່າງມາດຕາ 118 ຂອງບົດອະທິບາຍປະມວນກົດໝາຍແພ່ງ; 3. ການຍຸບເລີກສະມາຄົມໃຫ້ເບິ່ງຕົວຢ່າງມາດຕາ 119 ຂອງບົດອະທິບາຍປະມວນກົດໝາຍແພ່ງ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງຂຶ້ນໃໝ່ ເພື່ອເປັນພື້ນຖານໃນການກຳນົດຫຼັກການລວມ ຂອງ ການຄອບ, ການແຍກ ແລະ ການຍຸບເລີກສະມາຄົມ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 117, 118 ແລະ 119 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ຄ. ມູນນິທິ

ມາດຕາ 130 ມູນນິທິ

ມູນນິທິ ແມ່ນ ການຈັດຕັ້ງສັງຄົມທີ່ມີຖານະນິຕິບຸກຄົນ, ມີທຶນ, ຊັບສິນສະເພາະ ເພື່ອສາທາລະ ນະປະໂຫຍດ ດ້ານວັດທະນະທຳ, ການສຶກສາ, ສິ່ງແວດລ້ອມ, ສາທາລະນະສຸກ, ກີລາ-ກາຍຍະກຳ, ວິທະຍາສາດ, ການກຸສົນ, ມະນຸດສະທຳ ແລະ ອື່ນໆ ໂດຍບໍ່ຫວັງຜົນກຳໄລ.

ການນຳໃຊ້ຊັບສິນຂອງມູນນິທິບໍ່ເປັນການຫາຜົນປະ�โຫຍດສ່ວນຕົວຂອງບຸກຄົນໃດໜຶ່ງ ນອກ ຈາກເພື່ອດຳເນີນການ ຕາມຈຸດປະສົງຂອງມູນນິທິເທົ່ານັ້ນ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ຄວາມໝາຍຂອງມູນນິທິ, ຈຸດປະສົງໃນການສ້າງມູນນິທິ ແລະ ການນຳໃຊ້ຊັບສິນຂອງມູນນິທິ.

ຕົວຢ່າງ	**ກ** ແລະ **ຂ** ມີແນວຄວາມຄິດສ້າງຕັ້ງມູນນິທິການສຶກສາໃຫ້ແກ່ນັກຮຽນຜູ້ທີ່ຮຽນເກັ່ງ ທີ່ມີຄວາມທຸກຍາກ ໂດຍສະໜອງທຶນການສຶກສາ: ຄ່າຮຽນ, ຄ່າອຸປະກອນການຮຽນ, ປຶ້ມຮຽນ, ເສື້ອຜ້າ ແລະ ອື່ນໆ ຈຶ່ງໄດ້ຊັກຊວນ **ຄ, ງ** ແລະ **ຈ** ທີ່ມີເຈດຕະນາຄືກັນ ສ້າງມູນນິທິເພື່ອການສຶກສາຂຶ້ນ. ກໍລະນີ ການສ້າງມູນນິທິດັ່ງກ່າວ ແມ່ນເພື່ອຈຸດປະສົງທາງດ້ານສົ່ງເສີມການສຶກສາ ແລະ ການເຄື່ອນໄຫວຂອງມູນນິທິດັ່ງກ່າວບໍ່ແມ່ນເພື່ອຜົນປະ�โຫຍດ ຫຼື ສ້າງຜົນກຳໄລຈາກທຶນຮອນ ທີ່ ຜູ້ກໍ່ຕັ້ງ (**ກ, ຂ, ຄ, ງ** ແລະ **ຈ**).
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກມາດຕາ 2 ມູນນິທິ ຂອງດຳລັດວ່າດ້ວຍມູນນິທິ. ມູນນິທິ ແມ່ນຮູບການໜຶ່ງຂອງນິຕິບຸກຄົນໃນວັກສຸດທ້າຍຂອງມາດຕານີ້ກຳນົດການນຳໃຊ້ຊັບສິນຂອງມູນນິທິໃຫ້ຈະແจ້ງຍິ່ງຂຶ້ນ ບໍ່ໄດ້ກຳນົດກ່ຽວກັບບັນຫາດັ່ງກ່າວ. ຄຳວ່າ "ໂດຍບໍ່ຫວັງຜົນກຳໄລ" ກຳນົດໄວ້ໃນມາດຕາ 3 ການອະທິບາຍຄຳສັບໃນດຳລັດວ່າດວ້ຍມູນນິທິ ໝາຍເຖິງ ທຶນ, ຊັບສິນ, ລາຍຮັບ ທີ່ໄດ້ມາຈາກການເຄື່ອນໄຫວ ຂອງມູນນິທິ ພາຍຫຼັງທີ່ຫັກຄ່າໃຊ້ຈ່າຍບໍລິຫານອອກແລ້ວ ສ່ວນທີ່ເຫຼືອບໍ່ໄດ້ນຳມາແບ່ງປັນກັນ, ບໍ່ສວຍໃຊ້ຜົນປະ�โຫຍດສ່ວນຕົວແຕ່ນຳໃຊ້ຕາມຈຸດປະສົງທີ່ໄດ້ກຳນົດໄວ້ໃນກົດລະບຽບຂອງມູນນິທິ. ໃນຈຸດນີ້ເປັນອົງປະກອບທີ່ສຳຄັນຂອງວັກສອງຂອງມາດຕານີ້ ທີ່ກຳນົດບໍ່ໃຫ້ນຳໃຊ້ຊັບສິນຂອງມູນນິທິ ເພື່ອຜົນປະ�โຫຍດສ່ວນຕົວຂອງຜູ້ລິເລີ່ມກໍ່ຕັ້ງມູນນິທິ ຫຼື ບຸກຄະລາກອນຂອງມູນນິທິ. ຄຳວ່າ "ຊັບສິນ" ໃນສາຍພົວພັນຂອງມູນນິທິ ກຳນົດໄວ້ໃນມາດຕາ 3 ການອະທິບາຍຄຳສັບ ໃນດຳລັດວ່າດ້ວຍມູນນິທິ ໝາຍເຖິງ ຕຶກ, ອາຄານ, ທີ່ດິນ, ພາຫະນະ, ອຸປະກອນຮັບໃຊ້ ແລະ ວັດຖຸອື່ນໆ ທີ່ໄດ້ມາຈາກການຊື້, ເຊົ່າ, ການບໍລິຈາກ ແລະການປະກອບສ່ວນຂອງບຸກຄົນ,ນິຕິບຸກຄົນ, ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ຫຼື ລັດມອບໃຫ້. ຖານະນິຕິບຸກຄົນຂອງມູນນິທິ" ໝາຍເຖິງ ມູນນິທິ ທີ່ສ້າງຕັ້ງຂຶ້ນຕາມກົດໝາຍ, ມີທຶນ, ຊັບສິນ, ມີກົດລະບຽບ, ມີສຳນັກງານ, ມີຕາປະທັບ ແລະ ມີບັນຊີເງິນຝາກຢູ່ທະນາຄານຖືກຕ້ອງຕາມກົດໝາຍ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 2 ແລະ ມາດຕາ 3 ຂອງດຳລັດວ່າດ້ວຍມູນນິທິ, ເລກທີ 149/ນຍ, ລົງວັນທີ 19 ພຶດສະພາ 2011; ມາດຕາ 105 ຂໍ້ 2 ແລະ ມາດຕາ 107 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 131 ຂອບເຂດການເຄື່ອນໄຫວຂອງມູນນິທິ

ມູນນິທິ ມີຂອບເຂດການເຄື່ອນໄຫວ ດັ່ງນີ້:

1. ມູນນິທິທີ່ເຄື່ອນໄຫວໃນຂອບເຂດທົ່ວປະເທດ;
2. ມູນນິທິທີ່ເຄື່ອນໄຫວໃນຂອບເຂດແຂວງ, ນະຄອນຫຼວງ;
3. ມູນນິທິທີ່ເຄື່ອນໄຫວໃນຂອບເຂດເມືອງ, ເທດສະບານ, ນະຄອນ.

ຈຸດປະສົງ	ເພື່ອກຳນົດກ່ຽວກັບປະເພດ ແລະ ຂອບເຂດການເຄື່ອນໄຫວຂອງມູນນິທິ
ຕົວຢ່າງ	1. ມູນນິທິຄົນພິການຫູ "**ກ**ຂ**ຄ**" ສ້າງຕັ້ງຂຶ້ນຢູ່ແຂວງ **ງ**, ມູນນິທິ **ກ**ຂ**ຄ** ມີຈຸດປະສົງເພື່ອຊ່ວຍເຫຼືອຄົນພິການຫູ ດ້ວຍການສອນໃຫ້ຜູ້ພິການຫູ ໃຊ້ພາສາມື ແລະ ສົ່ງເສີມການໃຊ້ພາສາມືສຳລັບຄົນພິການ ໃນຂອບເຂດທົ່ວປະເທດ. ກໍລະນີ ເຖິງແມ່ນວ່າ ມູນນິທິ ຈະສ້າງຕັ້ງຂຶ້ນຢູ່ແຂວງ **ງ** ກໍຕາມ ມູນນິຕິດັ່ງກ່າວຍັງສາມາດເຄື່ອນໄຫວກິດຈະກຳ ຕາມຈຸດປະສົງຂອງຕົນໄດ້ ຢູ່ບ່ອນອື່ນໆໃນຂອບເຂດທົ່ວປະເທດ. 2. ມູນນິທິຮ່ວມໃຈແຂວງ **ກ** ເປັນມູນນິທິທີ່ສ້າງຕັ້ງຂຶ້ນເພື່ອຜູ້ດ້ອຍໂອກາດຢູ່ແຂວງ **ກ** ມູນນິທິນີ້ມີຂອບເຂດການເຄື່ອນໄຫວ ໃນຂອບເຂດແຂວງ **ກ** ເທົ່ານັ້ນ. 3. ມູນນິທິ **ກ** ສ້າງຕັ້ງຂຶ້ນເພື່ອສົ່ງເສີມການອ່ານນິທານພື້ນເມືອງ ໃນນະຄອນ **ຂ** ມູນນິທິນີ້ມີຂອບເຂດການເຄື່ອນໄຫວສະເພາະແຕ່ຢູ່ນະຄອນ **ຂ** ເທົ່ານັ້ນ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 8 ລະດັບມູນນິທິ ຂອງດຳລັດວ່າດ້ວຍມູນນິທິ ໂດຍປ່ຽນຈາກຄຳວ່າ "ລະດັບ" ມູນນິທິ ໃນມາດຕາດັ່ງກ່າວເປັນ "ຂອບເຂດ" ຂອງມູນນິທິ ເພື່ອໃຫ້ສອດຄ່ອງກັບເນື້ອໃນ ແລະ ຄວາມໝາຍຂອງມາດຕາ 9 ມູນນິທິເຄື່ອນໄຫວໃນຂອບເຂດທົ່ວປະເທດ, ມາດຕາ 10 ມູນນິທິເຄື່ອນໄຫວໃນຂອບເຂດແຂວງ ຫຼື ນະຄອນ; ແລະ ມາດຕາ 11 ມູນນິທິເຄື່ອນໄຫວໃນຂອບເຂດເມືອງ ຫຼື ເທດສະບານ ຂອງດຳລັດດັ່ງກ່າວ. ອີງຕາມມາດຕາ 9 ຂອງດຳລັດວ່າດ້ວຍມູນນິທິ, ມູນນິທິເຄື່ອນໄຫວໃນຂອບເຂດທົ່ວປະເທດ ໝາຍເຖິງ ມູນນິທິທີ່ໄດ້ຮັບອະນຸຍາດ ແລະ ສ້າງຕັ້ງໃຫ້ເຄື່ອນໄຫວຢ່າງກວ້າງຂວາງ ໃນຂອບເຂດທົ່ວປະເທດ ຫຼື ພາກໃດພາກໜຶ່ງທີ່ກວມເອົາຫຼາຍແຂວງ, ນະຄອນ. ອີງຕາມມາດຕາ 10 ຂອງດຳລັດວ່າດ້ວຍມູນນິທິ, ມູນນິທິເຄື່ອນໄຫວໃນຂອບເຂດແຂວງ ຫຼື ນະຄອນ ໝາຍເຖິງ ມູນນິທິທີ່ໄດ້ຮັບອະນຸຍາດ ແລະ ສ້າງຕັ້ງໃຫ້ເຄື່ອນໄຫວສະເພາະ ໃນຂອບເຂດແຂວງໃດໜຶ່ງ ຫຼື ນະຄອນໃດໜຶ່ງ. ອີງຕາມມາດຕາ 11 ຂອງດຳລັດວ່າດ້ວຍມູນນິທິ, ມູນນິທິເຄື່ອນໄຫວໃນຂອບເຂດເມືອງ ຫຼື ເທດສະບານ ໝາຍເຖິງ ມູນນິທິທີ່ໄດ້ຮັບອະນຸຍາດ ແລະ ສ້າງຕັ້ງໃຫ້ເຄື່ອນໄຫວສະເພາະ ໃນຂອບເຂດເມືອງ ຫຼື ເທດສະບານ ໃດໜຶ່ງ ເທົ່ານັ້ນ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 8, 9, 10 ແລະ 11 ດຳລັດວ່າດ້ວຍມູນນິທິ, ເລກທີ 149/ນຍ, ລົງວັນທີ 19 ພຶດສະພາ 2011; ມາດຕາ 123 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 132 ເງື່ອນໄຂການສ້າງຕັ້ງມູນນິທິ

ການສ້າງຕັ້ງມູນນິທິ ຕ້ອງມີເງື່ອນໄຂຄົບຖ້ວນ ດັ່ງນີ້:

1. ມີຈຸດປະສົງບໍ່ຂັດກັບລັດຖະທຳມະນູນ, ກົດໝາຍ ແລະ ຮີດຄອງປະເພນີອັນດີງາມຂອງຊາດ, ຂອງ ທ້ອງຖິ່ນ ແລະ ເຜົ່າຕ່າງໆ; ບໍ່ເປັນໄພອັນຕະລາຍຕໍ່ຄວາມໝັ້ນຄົງຂອງຊາດ, ຄວາມເປັນ ລະບຽບ ຮຽບຮ້ອຍຂອງສັງຄົມ ແລະ ສິດເສລີພາບຂອງບຸກຄົນ;

2. ມີຜູ້ລິເລີ່ມ ຊຶ່ງແມ່ນບຸກຄົນ ຫຼື ນິຕິບຸກຄົນ ທີ່ມີຄວາມສາມາດທາງດ້ານການປະພຶດ ຕາມທີ່ ໄດ້ກຳ ນົດໄວ້ໃນປະມວນກົດໝາຍສະບັບນີ້;

3. ມີກົດລະບຽບ, ມີສຳນັກງານ ແລະ ຊັບສິນ ເພື່ອຮັບປະກັນບັນລຸຈຸດປະສົງຂອງມູນນິທິ.

ຈຸດປະສົງ	ເພື່ອກຳນົດເງື່ອນໄຂພື້ນຖານໃນການສ້າງຕັ້ງມູນນິທິ.
ຕົວຢ່າງ	1. **ກ** ແລະ **ຂ** ໄດ້ສ້າງຕັ້ງມູນນິທິ ຊ່ວຍເຫຼືອຄົນພິການ **ຄ**, ໂດຍຖືກຕ້ອງ ແລະ ໄດ້ຮັບອະນຸຍາດຈາກພາກສ່ວນທີ່ກ່ຽວຂ້ອງຕາມກົດໝາຍ ແລະ ລະບຽບການ; 2. **ກ** ອາຍຸ 35 ປີ ແລະ **ຂ** ອາຍຸ 25 ປີ ທັງສອງໄດ້ສ້າງຕັ້ງມູນນິທິ ຊ່ວຍເຫຼືອ ຄົນພິການ **ຄ, ກ** ແລະ **ຂ** ມີຄວາມສາມາດທາງດ້ານການປະພຶດ ໃນ ການເຄື່ອນໄຫວເຂົ້າຮ່ວມ ເຮັດສັນຍາສ້ອມແປງຫ້ອງການຂອງມູນນິທິ ກັບ ບໍລິສັດສ້ອມແປງໃດໜຶ່ງ. 3. ມູນນິທິ **ຄ** ປະກອບມີ ປະທານ **1** ທ່ານ, ຮອງປະທານ 2 ທ່ານ ແລະ ມີພະນັກງານຊ່ວຍວຽກທັງໝົດມີ 10 ທ່ານ ມີສຳນັກງານຕັ້ງຢູ່ບ້ານ **ງ**, ເມືອງ **ຈ**, ແຂວງ **ສ** ຊຶ່ງມີຊັບສິນ ແລະ ລະບຽບການເຄື່ອນໄຫວຂອງ ມູນນິທິ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 7 ຂອງດຳລັດວ່າດ້ວຍ ມູນນິທິ ປີ 2011ການ ປັບປຸງມາດຕານີ້ເຫັນວ່າ ລະບຽບການ, ຂັ້ນຕອນໃນການສ້າງຕັ້ງມູນນິທິ ທີ່ ກຳນົດໃນດຳລັດ ແມ່ນກຳນົດລະອຽດສະເພາະແຕ່ລະເງື່ອນໄຂ, ໃນປະມວນ ກົດໝາຍແພ່ງ ແມ່ນຈະກຳນົດຫຼັກອັນເປັນພື້ນຖານ ໃນການສ້າງຕັ້ງມູນນິທິເທົ່າ ນັ້ນ.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງ ຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 8, 9, 10 ແລະ 11 ດຳລັດວ່າດ້ວຍມູນນິທິ, ເລກທີ 149/ນຍ, ລົງ ວັນທີ 19 ພຶດສະພາ 2011; ມາດຕາ 123 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 133 ການຂໍສ້າງຕັ້ງມູນນິທິ

ການຂໍສ້າງຕັ້ງມູນນິທິ ໃຫ້ປະຕິບັດຕາມເງື່ອນໄຂ, ລະບຽບການ ແລະ ຂັ້ນຕອນ ທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນກ່ຽວກັບການສ້າງຕັ້ງມູນນິທິ ທີ່ກຳນົດເງື່ອນໄຂລວມພື້ນຖານໃນການສ້າງຕັ້ງໄດ້ກຳນົດໄວ້ໃນປະມວນກົດໝາຍແພ່ງ ສ່ວນເງື່ອນໄຂສະເພາະໄດ້ກຳນົດໄວ້ໃນກົດໝາຍທີ່ກ່ຽວຂ້ອງ.
ຕົວຢ່າງ	**ກ** ແລະ **ຂ** ຕ້ອງການຕັ້ງມູນນິທິ ເພື່ອການສຶກສາໃຫ້ແກ່ນັກຮຽນຜູ້ທີ່ຮຽນເກັ່ງແຕ່ມີຄວາມທຸກຍາກໃນ ສປປ ລາວ. ນອກຈາກຈະອີງໃສ່ມາດຕາ 132 ຂອງປະມວນກົດໝາຍແພ່ງແລ້ວ ຍັງຕ້ອງໄດ້ອີງໃສ່ເງື່ອນໄຂສະເພາະທີ່ກ່ຽວຂ້ອງຕື່ມອີກ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກເນື້ອໃນຂອງມາດຕາ 12 ແລະ 13 ຂອງດຳລັດວ່າດ້ວຍມູນນິທິ ຊຶ່ງມາດຕາ 12 ແລະ 13 ກຳນົດວິທີການ ແລະ ຂັ້ນຕອນຂອງການສະເໜີອະນຸມັດໃນການສ້າງຕັ້ງ ມູນນິທິ ຊຶ່ງເປັນຫຼັກການພື້ນຖານ ການສ້າງຕັ້ງມູນນິທິ ແຕ່ລະປະເພດ ມີກົດໝາຍ ຫຼື ນິຕິກຳທີ່ກ່ຽວ ຂ້ອງກຳນົດເງື່ອນໄຂໃດໜຶ່ງສະເພາະ ຊຶ່ງປະມວນກົດໝາຍແພ່ງ ບໍ່ສາມາດກຳນົດລະອຽດໄດ້ ສະນັ້ນ ມາດຕາ 133 ຈຶ່ງກຳນົດເນື້ອໃນດັ່ງກ່າວ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ດຳລັດວ່າດ້ວຍມູນນິທິ, ເລກທີ 149/ນຍ, ລົງວັນທີ 19 ພຶດສະພາ 2011,ມາດຕາ 12 ແລະ 13; ມາດຕາ 132 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 134 ກົດລະບຽບຂອງມູນນິທິ

ມູນນິທິຕ້ອງມີກົດລະບຽບ ຊຶ່ງປະກອບດ້ວຍຊື່ຂອງມູນນິທິ ແລະ ເນື້ອໃນອື່ນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 108 ຂອງປະມວນກົດໝາຍສະບັບນີ້ ແລະ ລະບຽບການທີ່ກ່ຽວຂ້ອງ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ເນື້ອໃນພື້ນຖານຂອງກົດລະບຽບຂອງມູນນິທິ.
ຕົວຢ່າງ	**ກ** ແລະ **ຂ** ສ້າງຕັ້ງມູນນິທິ ຢູ່ທີ່ແຂວງ **ຈ**, ຊຶ່ງມີກົດລະບຽບພາຍໃນຂອງມູນນິທິ ເຊັ່ນ ຊື່ມູນນິທິ **ຄ**, ມີຈຸດປະສົງເພື່ອສົ່ງເສີມ ແລະ ອະນຸລັກໜັງສືທຳໃບລານ, ໂຄງປະກອບການຈັດຕັ້ງ ແລະ ຂອບເຂດການເຄື່ອນໄຫວ ແລະ ເນື້ອໃນຕົ້ນຕໍອື່ນ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 15 ຂອງດຳລັດວ່າດ້ວຍມູນນິທິ ຊຶ່ງປະມວນກົດໝາຍແພ່ງແມ່ນໄດ້ກຳນົດເປັນຫຼັກການລວມໄວ້ ສ່ວນເນື້ອໃນລະອຽດສະເພາະແມ່ນກຳນົດໄວ້ໃນດຳລັດດັ່ງກ່າວ.

ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 15 ດຳລັດວ່າດ້ວຍມຸນນິທິ ປີ 2011ມາດຕາ 108 ແລະ 135 ຂອງປະມວນກົດໝາຍແພ່ງ
ຂໍ້ມູນອື່ນຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 135 ໂຄງປະກອບການຈັດຕັ້ງ ແລະ ການຄຸ້ມຄອງບໍລິຫານຂອງມູນນິທິ

ມູນນິທິ ຕ້ອງມີໂຄງປະກອບການຈັດຕັ້ງຂອງຕົນ.

ໂຄງປະກອບການຈັດຕັ້ງ ແລະ ການຄຸ້ມຄອງບໍລິຫານຂອງມູນນິທິ ໄດ້ກຳນົດໄວ້ໃນກົດລະບຽບຂອງມູນນິທິ ຫຼື ຂໍ້ຕົກລົງສ້າງຕັ້ງມູນນິທິ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ກ່ຽວກັບ ມູນນິທິກໍແມ່ນນິຕິບຸກຄົນເຊັ່ນດຽວກັນ ໂຄງປະກອບການຈັດຕັ້ງ ແລະ ການເຄື່ອນໄຫວຂອງມູນນິທິ ໄດ້ກຳນົດໄວ້ໃນກົດລະບຽບຂອງຕົນ ຫຼື ຂໍ້ຕົກລົງສ້າງຕັ້ງມູນນິທິ.
ຕົວຢ່າງ	1. **ກ** ແລະ **ຂ** ຕ້ອງການສ້າງມູນນິທິໃດໜຶ່ງຂຶ້ນ ຕ້ອງໄດ້ສ້າງໂຄງປະກອບການຈັດ ຕັ້ງຂອງຕົນເອງຂຶ້ນເຊັ່ນ: ຄະນະບໍລິຫານງານ, ຄະນະກວດກາ, ເລຂາທິ ການ, ບຸກຄະລາກອນຕໍ່າແໜ່ງງານອື່ນໆ ແລະ ສະມາຊິກ. 2. ມູນນິທິ **ສ** ໄດ້ຕົກລົງໃຫ້ມີຄະນະບໍລິຫານປະກອບມີ ສາມຄົນ ຊຶ່ງໃນ ສາມ ຄົນນັ້ນ ຈະເປັນຜູ້ຄຸ້ມຄອງບໍລິຫານ ແລະ ຕົວແທນໃຫ້ແກ່ມູນນິທິ ໃນການຕັດສິນໃຈບັນຫາຕ່າງໆຂອງມູນນິທິ. ແຕ່ໃນກໍລະນີຫາກເປັນການຕັດສິນໃຈທີ່ມີຄວາມສຳຄັນຂອງມູນນິທິ ຕ້ອງໄດ້ຄັດເລືອກເອົາຜູ້ຄະນະບໍລິຫານຄົນໃໝ່ດ້ວຍການລົງຄະແນນສຽງຂອງສະມາຊິກ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກເນື້ອໃນມາດຕາ 20 ຂອງດຳລັດມູນນິທິຊຶ່ງໄດ້ກຳນົດແຕ່ລະໂຄງປະກອບຂອງບຸກຄະລາກອນໃນມູນນິທິນັ້ນ ແຕ່ປະມວນກົດໝາຍແພ່ງ ຈະກຳນົດຫຼັກພື້ນຖານກ່ຽວກັບໂຄງປະກອບ ແລະ ການຄຸ້ມຄອງຂອງມູນນິທິ ເພື່ອເປັນບ່ອນອີງໃຫ້ແກ່ຜູ້ສ້າງຕັ້ງມູນນິທິໃນການກຳນົດຄະນະບໍລິຫານງານ, ກວດກາ ແລະ ການກຳນົດບຸກຄະລາກອນໃນແຕ່ລະຕຳແໜ່ງງານໃຫ້ມີຄວາມ ເໝາະສົມກັບຄວາມຮຽກຮ້ອງ ຕ້ອງການຂອງມູນນິທິ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 20 ຂອງດຳລັດວ່າດ້ວຍມຸນນິທິ ປີ 2011.

ຂໍ້ມູນອື່ນຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 136 ການຄວບ, ການແຍກ ແລະ ການຍຸບເລີກມູນນິທິ

ມູນນິທິ ສາມາດຄວບ, ແຍກ ແລະ ຍຸບເລີກ ຕາມຈຸດປະສົງຂອງຜູ້ສ້າງຕັ້ງມູນນິທິ.

ການຄວບ, ການແຍກ ແລະ ການຍຸບເລີກມູນນິທິ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 117, 118 ແລະ 119 ຂອງປະມວນກົດໝາຍສະບັບນີ້

ຈຸດປະສົງ	ເພື່ອກຳນົດໃຫ້ຮັບຮູ້ວ່າມູນນິທິ ສາມາດຄວບ, ແຍກ ຫຼື ຍຸກເລີກໄດ້.
ຕົວຢ່າງ	1. ບັນດາຜູ້ກໍ່ຕັ້ງມູນນິທິໄດ້ຕົກລົງເຫັນດີຄວບມູນນິທິຊ່ວຍເຫຼືອຄົນທຸກຍາກ **ກ** ທີ່ຕັ້ງຢູ່ແຂວງ **ຂ** ແລະ ມູນນິທິຊ່ວຍເຫຼືອຄົນທຸກຍາກ **ຄ** ທີ່ຕັ້ງຢູ່ແຂວງ **ງ** ເຂົ້າກັນເປັນມູນນິທິດຽວ. 2. ບັນດາຜູ້ກໍ່ຕັ້ງມູນນິທິເພື່ອການສຶກສາ ໃຫ້ແກ່ນັກຮຽນຜູ້ທີ່ຮຽນເກັ່ງແຕ່ມີຄວາມທຸກຍາກ ຕົກລົງເຫັນດີແຍກມູນນິທິອອກເປັນສອງມູນນິທິ ຄື ມູນນິທິເພື່ອການສຶກສາ ແລະ ມູນນິທິຊ່ວຍເຫຼືອຜູ້ທຸກຍາກ. 3. ບັນດາຜູ້ກໍ່ຕັ້ງມູນນິທິເດັກດີ ຕົກລົງເຫັນດີຍຸບມູນນິທິດັ່ງກ່າວ ເນື່ອງຈາກ ບັນດາຜູ້ກໍ່ຕັ້ງບໍ່ມີເວລາເຄື່ອນໄຫວ ແລະ ເຮັດກິດຈະກຳ, ແລະ ທຶນຮອນ ຂອງມູນນິທິກໍໄດ້ ໝົດລົງ ແລະ ບັນດາຜູ້ກໍ່ຕັ້ງບໍ່ຕ້ອງການລະດົມທຶນອີກ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກເນື້ອໃນມາດຕາ 31 ແລະ 32 ຂອງດຳລັດມູນນິທິ ເພື່ອເປັນພື້ນຖານໃນການກຳນົດຫຼັກການລວມ ຂອງການຄວບ, ການແຍກ ແລະ ການຍຸບເລີກສະມາຄົມ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 31 ແລະ 32 ຂອງດຳລັດວ່າດ້ວຍມູນນິທິ, ເລກທີ 149/ນຍ, ລົງວັນທີ 19 ພຶດສະພາ 2011.
ຂໍ້ມູນອື່ນຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ບົດອະທິບາຍປະມວນກົດໝາຍ

ພາກທີ III ຄອບຄົວ
(ມາດຕາ 137-226)

ພາກທີ III
ຄອບຄົວ
ໝວດທີ 1
ຫຼັກການທົ່ວໄປ

ມາດຕາ 137 ຄອບຄົວ

ຄອບຄົວ ແມ່ນ ຈຸລັງຂອງສັງຄົມ ຊຶ່ງມີ ຜົວ, ເມຍ, ລູກ ຫຼື ສະມາຊິກອື່ນໃນຄອບຄົວ ທີ່ມີສາຍພົວພັນຊຶ່ງກັນ ແລະ ກັນ ແລະ ດຳລົງຊີວິດຮ່ວມກັນ ໂດຍມີສຳມະໂນຄົວຢັ້ງຢືນຢ່າງຖືກຕ້ອງ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ຄອບຄົວແມ່ນຫຍັງ, ສະມາຊິກໃນຄອບຄົວມີໃຜແດ່, ຈະມີເງື່ອນໄຂຫຍັງແນ່ເພື່ອໃຫ້ຮັບຮູ້ວ່າເປັນຄອບຄົວ.
ຕົວຢ່າງ	1. **ກ** ໄດ້ຈົດທະບຽນຄອບຄົວ ນຳຫ້ອງການອົງການທະບຽນຄອບຄົວ ຊຶ່ງປະກອບມີ: **ກ** ເປັນຫົວໜ້າຄອບຄົວ, **ຂ** ເປັນເມຍ, **ຄ** ເປັນພໍ່ຕູ້, **ງ** ເປັນແມ່ຕູ້, **ດ** ເປັນລູກ, **ລ** ເປັນນ້ອງຊາຍ, **ຍ** ເປັນຫຼານຊາຍ ພວກກ່ຽວໄດ້ດຳລົງຊີວິດຮ່ວມກັນຕາມທະບຽນປຶ້ມສຳມະໂນຄົວເລກທີ 099. 2. **ກ** ໄດ້ຈົດທະບຽນຄອບຄົວ ນຳຫ້ອງການອົງການທະບຽນຄອບຄົວ ຊຶ່ງຕາມລາຍຊື່ໃນປຶ້ມສຳມະໂນຄົວ ປະກອບມີ: **ກ** ເປັນຫົວໜ້າຄອບຄົວ, **ຂ** ເປັນແມ່, **ຄ** ຫຼານຊາຍ ແລະ **ດ** ເປັນນ້ອງສາວ ແລະ ໄດ້ດຳລົງຊີວິດຮ່ວມກັນຕາມທະບຽນຄອບຄົວເປັນຄອບຄົວໜຶ່ງ.
ເຫດຜົນໃນການ ຮັກສາເດີມ	ມາດຕານີ້ຮັກສາເນື້ອໃນເດີມມາດຕາ 1/1 ຂອງກົດໝາຍວ່າດ້ວຍຄອບຄົວ ປີ 2008
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 3 ຂໍ້ 2 ຂອງກົດໝາຍແຕ່ງດອງ ແລະ ຄອບຄົວ ຫວຽດນາມ ປີ 2014.
ມາດຕາອ້າງອີງ	ມາດຕາ 2 ຂອງກົດໝາຍວ່າດ້ວຍການຈົດທະບຽນຄອບຄົວ ປີ 2018.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 138 ສາຍພົວພັນຄອບຄົວ

ສາຍພົວພັນຄອບຄົວ ແມ່ນສາຍພົວພັນທີ່ເນື່ອງມາຈາກການຈົດທະບຽນແຕ່ງດອງ, ການມີລູກຮ່ວມກັນ ແລະ ການເອົາລູກຂອງບຸກຄົນອື່ນມາເປັນລູກລ້ຽງ ຊຶ່ງພາໃຫ້ເກີດມີສິດ ແລະ ພັນທະທາງຄອບຄົວຕໍ່ກັນ.

ສາຍພົວພັນຄອບຄົວ ເກີດຂຶ້ນໂດຍບໍ່ຂຶ້ນກັບຕົ້ນກຳເນີດ, ຖານະທາງດ້ານເສດຖະກິດ ແລະ ສັງຄົມ, ເຊື້ອຊາດ, ເຜົ່າ, ລະດັບວັດທະນະທຳ, ອາຊີບ, ສາສະໜາ, ພູມລຳເນົາ ແລະ ອື່ນໆ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ວ່າ ສາຍພົວພັນຄອບຄົວຈະເກີດຈາກການຈົດທະບຽນແຕ່ງດອງ ຊຶ່ງແມ່ນສາຍພົວພັນຜົວ ແລະ ເມຍ, ເກີດຈາກການຈົດທະບຽນການເກີດຂອງລູກຮ່ວມກັນ ຊຶ່ງແມ່ນສາຍພົວພັນພໍ່, ແມ່ ແລະ ລູກ; ການເອົາລູກຂອງບຸກຄົນອື່ນມາເປັນລູກລ້ຽງໂດຍຜ່ານການຕັດສິນຂອງສານ ພ້ອມທັງຈົດທະບຽນຄອບຄົວກໍຈະໄດ້ເປັນລູກລ້ຽງ ຈາກນັ້ນກໍຈະໄດ້ຮັບສິດ ແລະ ພັນທະຕາມກົດໝາຍ.

ຕົວຢ່າງ	**ກ** ໄດ້ຈົດທະບຽນການແຕ່ງດອງ ກັບ **ຂ,** ສາຍພົວພັນຄອບຄົວ ເກີດຂຶ້ນນັບແຕ່ເວລາ **ກ** ແລະ **ຂ** ໄດ້ຈົດທະບຽນການແຕ່ງດອງນຳກັນ ເປັນຕົ້ນໄປ **ກ** ແລະ **ຂ** ມີລູກຮ່ວມກັນສາມຄົນ ຄື: **ຄ, ງ** ແລະ **ຈ,** ໄດ້ເອົາ **ຊ** ມາເປັນລູກລ້ຽງ ຊຶ່ງ **ກ** ແລະ **ຂ** (ພໍ່ແມ່), **ຄ, ງ** ແລະ **ຈ** (ລູກຄີງ) ແລະ **ຊ** (ລູກລ້ຽງ) ລ້ວນແຕ່ ມີສິດ ແລະ ພັນທະທາງຄອບຄົວຕໍ່ກັນ. (ສຳລັບ ສິດ ແລະ ພັນທະທາງຄອບຄົວນັ້ນ ໃຫ້ເບິ່ງຕາມຕົວຢ່າງມາດຕາ 161 ແລະ 164 ຂອງບົດອະທິບາຍປະມວນກົດໝາຍແພ່ງ).
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 1/2 ແລະ ມາດຕາ 2 ວັກ2 ຂອງກົດໝາຍວ່າດ້ວຍຄອບຄົວ ປີ 2008 ໄດ້ປັບປຸງຄວາມໝາຍ ແລະ ເງື່ອນໄຂຂອງສາຍພົວພັນຄອບຄົວ ແລະ ສາຍພົວພັນລະຫວ່າງມາດຕາ 137 "ຄອບຄົວ"
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນ ຫຼື ປະເພນີສານ	ມາດຕາທີ່ກ່ຽວກັບຄອບຄົວ ແລະ ສາຍພົວພັນຄອບຄົວ ບໍ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍຄອບຄົວ ປີ 1990, ແຕ່ສະບັບ ປີ 2008 ແມ່ນໄດ້ກຳນົດມາດຕາດັ່ງກ່າວໄວ້.

ມາດຕາ 139 ສາຍຍາດ ແລະ ລຳດັບຂອງສາຍຍາດ

ສາຍຍາດໃນສາຍພົວພັນຄອບຄົວ ປະກອບດ້ວຍ ສາຍຍາດທາງສາຍເລືອດ ແລະ ສາຍຍາດທີ່ກ່ຽວພັນກັນ.

1. ສາຍຍາດທາງສາຍເລືອດ ແບ່ງອອກເປັນສອງປະເພດ ຄື ຍາດສາຍຕັ້ງ ແລະ ຍາດສາຍຂວາງ.

1.1 ຍາດສາຍຕັ້ງ ປະກອບດ້ວຍ ຍາດສາຍຕັ້ງເບື້ອງເທິງ ແລະ ຍາດສາຍຕັ້ງເບື້ອງລຸ່ມ.
ຍາດສາຍຕັ້ງເບື້ອງເທິງ ຈັດອອກເປັນລຳດັບ ຄື:

- ພໍ່ ແມ່;
- ປູ່, ຍ່າ, ພໍ່ເຖົ້າ, ແມ່ເຖົ້າ;
- ທວດ.

ຍາດສາຍຕັ້ງເບື້ອງລຸ່ມ ຈັດອອກເປັນລຳດັບ ຄື:

- ລູກ;
- ຫຼານ;
- ເຫຼນ.

ສຳລັບລູກລ້ຽງ ມີຖານະຄືກັນກັບລູກຄີງ.

1.2 ຍາດສາຍຂວາງ ຈັດອອກເປັນລຳດັບ ຄື:

- ອ້າຍ, ເອື້ອຍ, ນ້ອງ;
- ລູກຂອງ ອ້າຍ, ເອື້ອຍ, ນ້ອງ;
- ລຸງ, ປ້າ, ອາວ, ອາ, ນ້າບ່າວ, ນ້າສາວ.

2. ສາຍຍາດທີ່ກ່ຽວພັນກັນ ຈັດອອກເປັນລຳດັບ ຄື:

- ລູກນ້າ;
- ພໍ່, ແມ່ ຂອງ ຜົວ ຫຼື ເມຍ;
- ອ້າຍ, ເອື້ອຍ, ນ້ອງ ຂອງ ຜົວ ຫຼື ເມຍ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ກ່ຽວກັບ ຄວາມໝາຍຂອງສາຍຍາດຢູ່ໃນສາຍພົວພັນຄອບຄົວ ແລະ ສະແດງຕົວຢ່າງລະອຽດກ່ຽວກັບຂອບເຂດຂອງຜູ້ທີ່ເປັນສາຍຍາດ.
ຕົວຢ່າງ	**ຍາດສາຍຕັ້ງເບື້ອງເທິງມີ:** - ພໍ່ແມ່; - ປູ່, ຍ່າ, ພໍ່ຕູ້, ແມ່ຕູ້; - ທວດ.  **ຍາດສາຍຕັ້ງເບື້ອງລຸ່ມ:** - ລູກ; - ຫຼານ; - ເຫຼນ. ສຳລັບລູກລ້ຽງ ມີຖານະຄືກັນກັບລູກຄົງ. **ຍາດສາຍຂວາງ.** - ອ້າຍ, ເອື້ອຍ, ນ້ອງ; - ລູກຂອງອ້າຍ, ເອື້ອຍ, ນ້ອງ; - ລຸງ, ປ້າ, ອາວ, ອາ, ນ້າບ່າວ, ນ້າສາວ. **<u>ສາຍຍາດທີ່ກ່ຽວພັນກັນ</u>** - ລູກນ້າ; - ພໍ່, ແມ່ ຂອງຜົວ ຫຼື ເມຍ; - ອ້າຍ, ເອື້ອຍ, ນ້ອງ ຂອງຜົວ ຫຼື ເມຍ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງໃໝ່ເພື່ອໃຫ້ເຂົ້າໃຈເປັນເອກະພາບຄຳສັບວ່າຢູ່ໃນສາຍຍາດມີບຸກຄົນໃດແດ່, ໃຫ້ຮູ້ລຳດັບຂອງຍາດໃກ້ຊິດຕາມສາຍຍາດ, ສຳລັບ ລູກລ້ຽງ ກໍຖືວ່າເປັນລູກໃນສາຍເລືອດຄືກັນ, ສຳລັບລູກນ້ານັ້ນ ແມ່ນບໍ່ມີການກຳນົດ. ເພື່ອສະດວກໃນການກຳນົດສິດ ແລະ ພັນທະທາງດ້ານກົດໝາຍ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 725 ແລະ 726 ຂອງປະມວນກົດໝາຍແພ່ງຍີປຸ່ນ; ມາດຕາ 1589 ແລະ 1590 ຂອງປະມວນກົດໝາຍແພ່ງເຢຍລະມັນ ຢູ່ໃນພາກຄອບຄົວ; ມາດຕາ 741, 742 ແລະ 743 ຂອງປະມວນກົດໝາຍແພ່ງຝຣັ່ງ ຢູ່ໃນພາກສືບທອດມູນມໍຣະດົກ.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 140 ຄວາມສະເໝີພາບລະຫວ່າງຍິງ ແລະ ຊາຍໃນສາຍພົວພັນຄອບຄົວ

ຍິງ ແລະ ຊາຍ ມີສິດເທົ່າທຽມກັນໃນທຸກດ້ານ ກ່ຽວກັບສາຍພົວພັນຄອບຄົວ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນວ່າ ຍິງ-ຊາຍ ມີສິດເທົ່າທຽມກັນແຕ່ລະຄົນສາມາດເຄື່ອນໄຫວທາງດ້ານການເມືອງ, ເສດຖະກິດ, ວັດທະນະທຳ ແລະ ສັງຄົມ ຕ້ອງຢູ່ບົນພື້ນຖານຂອບເຂດທີ່ກົດໝາຍກຳນົດໄວ້.
ຕົວຢ່າງ	**ໃຫ້ເບິ່ງຕາມຕົວຢ່າງຂອງບົດອະທິບາຍປະມວນກົດໝາຍແພ່ງ ມາດຕາ 138** ຍິງ ແລະ ຊາຍ ມີສິດເທົ່າທຽມກັນໃນການແຕ່ງດອງນຳກັນ, ມີລູກຮ່ວມກັນ ແລະ ເອົາ ລູກຂອງຜູ້ອື່ນມາເປັນລູກລ້ຽງ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 2 ວັກ 1 ຂອງກົດໝາຍ ວ່າດ້ວຍຄອບຄົວ ປີ 2008.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 10 ຂອງປະມວນກົດໝາຍແພ່ງ; ມາດຕາ 17 ຂອງກົດໝາຍວ່າດ້ວຍການພັດທະນາ ແລະ ການປົກປ້ອງແມ່ຍິງ ປີ 2004.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 141 ສິດເສລີພາບໃນການແຕ່ງດອງ

ຍິງ ແລະ ຊາຍ ທີ່ພົ້ນກະສຽນອາຍຸ ມີສິດເສລີພາບໃນການເລືອກເອົາຄູ່ຮັກ ຕາມຄວາມສະໝັກໃຈ ແລະ ຄວາມມັກຮັກຂອງທັງສອງຝ່າຍ ເພື່ອເອົາກັນເປັນຜົວເມຍ.

ບຸກຄົນ, ຄອບຄົວ ຫຼື ການຈັດຕັ້ງ ບໍ່ມີສິດບັງຄັບ ຫຼື ຂັດຂວາງ ການແຕ່ງດອງຂອງ ລູກ, ຫຼານ, ສະມາຊິກອື່ນໃນຄອບຄົວ, ພະນັກງານ ແລະ ລັດຖະກອນ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງຕົນ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ວ່າຍິງ ແລະ ຊາຍ ມີສິດເລືອກຄູ່ຄອງດ້ວຍຕົນເອງ, ມັກຮັກດ້ວຍຄວາມສະໝັກໃຈໂດຍບໍ່ໄດ້ມີການບັງຂັບນາບຂູ່ຈາກຜູ້ປົກຄອງ,ຄູ້ມ ຄອງ, ດູແລ ແລະ ບຸກຄົນອື່ນ. ສິດ ແລະ ເສລີພາບ ຍິງ-ຊາຍໃນການເລືອກຄູ່ຄອງຊີວິດຂອງຕົນດ້ວຍຄວາມສະມັກໃຈ ແລະ ຄວາມມັກຮັກຂອງພວກກ່ຽວການແຕ່ງດອງ ຈະບໍ່ຖືກບັງຄັບ ຫຼື ຂັດຂວາງ ທາງດ້ານແນວຄິດ,ຈິດໃຈ ແລະ ການຈັດຕັ້ງ.
ຕົວຢ່າງ	**ກ** ອາຍຸ 25 ແລະ **ຂ** ອາຍຸ 19 ປີ ທັງສອງເປັນພະນັກງານຢູ່ກະຊວງ **ຄ** ມີຄວາມມັກຮັກກັນ ໄດ້ຕົກລົງເອົາກັນເປັນຜົວເມຍ ໂດຍບໍ່ມີການບັງຄັບ ຫຼື ຂັດຂວາງ ຈາກບຸກຄົນ, ພໍ່ແມ່, ຄອບຄົວ ຫຼື ການຈັດຕັ້ງຂອງກະຊວງ **ຄ**.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກມາດຕາ 3 ຂອງກົດໝາຍວ່າດ້ວຍ ຄອບຄົວ ປີ 2008 ເນື່ອງຈາກວ່າເນື້ອໃນຂອງມາດຕານີ້ ແມ່ນສອດຄ່ອງກັບຮີດຄອງປະເພນີ ແລະ ການດຳລົງຊີວິດຂອງສັງຄົມໃນປັດຈຸບັນ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 9 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 142 ການເປັນຜົວໜຶ່ງເມຍດຽວ

ການເອົາກັນເປັນຜົວ ເມຍ ຕ້ອງປະຕິບັດຫຼັກການຜົວໜຶ່ງເມຍດຽວ ເທົ່ານັ້ນ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ວ່າ ການເອົາກັນເປັນຜົວ-ເມຍຢ່າງຖືກຕ້ອງ ຕາມກົດໝາຍຂອງ ສ ປປ ລາວ ມີແຕ່ຜົວໜຶ່ງເມຍດຽວເທົ່ານັ້ນ ບໍ່ວ່າຈະຢູ່ໃນກໍລະນີໃດກໍຕາມຈະ ບໍ່ອະນຸຍາດໃຫ້ມີຜົວ ແລະ ເມຍຕື່ມອີກ (ທັງ ຊາຍ ແລະ ຍິງ).
ຕົວຢ່າງ	**ກ** ແລະ **ຂ** ໄດ້ແຕ່ງດອງເອົາກັນເປັນຜົວເມຍແລ້ວ, **ກ** ຢາກແຕ່ງດອງກັບ **ຄ** ອີກບໍ່ໄດ້.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກມາດຕາ 4 ຂອງກົດໝາຍว่าด้วย ຄອບຄົວ ປີ 2008 ເນື່ອງຈາກວ່າເນື້ອໃນຂອງມາດຕານີ້ ແມ່ນສອດຄ່ອງກັບຮີດຄອງປະເພນີ ແລະ ການດຳລົງຊີວິດຂອງສັງຄົມໃນປັດຈຸບັນ.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງ ຂອງປະເທດອື່ນ	ມາດຕາ 732 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 143 ການປົກປ້ອງສິດ ແລະ ຜົນປະໂຫຍດຂອງແມ່ ແລະ ເດັກ

ລັດ ແລະ ສັງຄົມ ຖືເອົາການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຜູ້ເປັນແມ່ ແລະ ເດັກ ເປັນບຸລິມະສິດ ໃນເວລາຜົວ ເມຍ ຢູ່ຮ່ວມກັນ, ແຍກກັນຢູ່ ຫຼື ຢ່າຮ້າງກັນ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ວ່າ ສິດ ແລະ ຜົນປະໂຫຍດອັນຊອບທຳຂອງຜູ້ເປັນແມ່ ແລະ ເດັກ ເປັນບູລິມະສິດຂອງລັດ ແລະ ສັງຄົມໃນການປົກປ້ອງຕໍ່ກັບຊີວິດ, ສຸຂະພາບ ແລະຜົນປະໂຫຍດ.
ຕົວຢ່າງ	**ກ ເປັນຜົວ ຂ ກຳລັງຖືພາມານ ແລະ ມີລູກຮ່ວມກັນ ຄ ອາຍຸ 16 ປີ.** 1. **ກ** ຜູ້ເປັນຜົວ ແລະ ພໍ່ ເປັນພະນັກງານ ສັງກັດຢູ່ບໍລິສັດນ້ຳຫວານ ນຳເອົາ ເງິນເດືອນ ມາມອບໃຫ້ **ຂ** ໃຊ້ຈ່າຍອອກຕະຫຼາດ, ຄ່າເຊົ່າເຮືອນ ຄ່າເຄື່ອງ ນຸ່ງຫົ່ມຂອງ **ຂ** ແລະ **ຄ** ແລະ ອື່ນໆ. 2. **ກ** ບໍ່ມີສິດຮ້ອງຂໍຢ່າຮ້າງ ກັບ **ຂ** ໃນເວລາທີ່ກຳລັງຖືພາມານ. 3. **ກ** ຜິດຖຽງ ກັບ **ຂ** ແລ້ວແຍກກັນຢູ່, **ກ** ຍັງໄດ້ມີຄວາມຮັບຜິດຊອບສິ່ງຄ່າ ລ້ຽງດູ ໃຫ້ **ຄ,** ຄ່າເຊົ່າເຮືອນ, ຄ່ານ້ຳປະປາ, ຄ່າໄຟຟ້າ ແລະ ອື່ນໆ. 4. **ກ** ແລະ **ຂ** ຢ່າຮ້າງກັນພາຍຫຼັງ **ຂ** ອອກລູກໄດ້ 3 ປີ, **ກ** ຍັງມີຄວາມ ຮັບຜິດຊອບສິ່ງຄ່າລ້ຽງດູ **ຄ** ແລະ ລູກທີ່ເກີດໃໝ່ ຈົນພົ້ນກະສຽນອາຍຸ.
ເຫດຜົນໃນການຮັກສາເດີມ	ມາດຕານີ້ຮັກສາເນື້ອໃນເດີມມາດຕາ 5 ຂອງກົດໝາຍว่าด้วย ຄອບຄົວ ປີ 2008 ເນື່ອງຈາກວ່າເນື້ອໃນຂອງມາດຕານີ້ ແມ່ນສອດຄ່ອງກັບຮີດຄອງປະເພນີ ແລະ ການດຳລົງຊີວິດຂອງສັງຄົມໃນປັດຈຸບັນ. ເນື້ອໃນມາດຕານີ້ມີຄວາມສຳຄັນ ແລະ ຈຳເປັນໃຫ້ແກ່ການປະຕິບັດສົນທິສັນ ຍາສາກົນ ໃນການພັດທະນາ, ສົ່ງເສີມ, ປົກປ້ອງສິດ ແລະ ຜົນປະໂຫຍດຂອງແມ່ ແລະ ເດັກ. ການຮັກສາມາດຕານີ້ໄວ້ ເນື່ອງຈາກວ່າລັດມີຈຸດປະສົງຕ້ອງການໃຫ້ທຸກໆອົງ ການຈັດຕັ້ງລັດ, ສັງຄົມຍົກສູງຄວາມຄວາມຮັບຜິດຊອບໃນການປົກປ້ອງສິດ ແລະ ຜົນປະໂຫຍດຂອງແມ່ ແລະ ເດັກ ເປັນບຸລິມະສິດ ໃນທຸກໆກໍລະນີຂອງ ສາຍພົວພັນຄອບຄົວ.

ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 3, 20, 21 ແລະ 24 ຂອງກົດໝາຍວ່າດ້ວຍການພັດທະນາ ແລະ ການປົກປ້ອງແມ່ຍິງ; ມາດຕາ 8 ແລະ 9 ຂອງກົດໝາຍວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດ ຂອງເດັກ; ມາດຕາ 215 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 144 ການພັດທະນາຄອບຄົວ

ລັດ ສົ່ງເສີມ ໃຫ້ທຸກອົງການຈັດຕັ້ງຂອງລັດ, ສັງຄົມ, ຫົວໜ່ວຍທຸລະກິດ ແລະ ພົນລະເມືອງທຸກຄົນ ພັດທະນາຄອບຄົວ ໃຫ້ມີຄວາມຜາສຸກ, ເປັນຄອບຄົວຕົວແບບ, ຄອບຄົວວັດທະນະທຳ, ມີຄວາມກ້າວໜ້າ, ສາມັກຄີປອງດອງ, ອົບອຸ່ນ, ຍຸຕິທຳ ແລະ ສີວິໄລ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ກ່ຽວກັບນະໂຍບາຍພື້ນຖານຂອງລັດຕໍ່ກັບການພັດທະນາຄອບຄົວ.
ຕົວຢ່າງ	1. ລັດໄດ້ສົ່ງເສີມສ້າງຄອບຄົວວັດທະນະທຳ, ແກ້ໄຂຄວາມທຸກຍາກ, ການຜະລິດເປັນສິນຄ້າ, ໜຶ່ງຜະລິດຕະພັນ ແລະ ອື່ນໆ 3 ດີ 4 ເປັນເຈົ້າ. 2. ຍົກຕົວຢ່າງໃຫ້ເຫັນເປັນຮູບປະທຳ ລັດໃຫ້ຄວາມສຳຄັນໃນການພັດທະນາຄອບຄົວ ເຊັ່ນ: ສ້າງ ແລະ ປະກອບບຸກຄະລະກອນ, ກໍ່ສ້າງໂຄງລາງພື້ນຖານ, ສະໜອງງົບປະມານ, ວັດຖຸອຸປະກອນ, ຂໍ້ມູນຂ່າວສານ, ໂຄສະນາເຜີຍແຜ່, ປຸກຈິດສຳນຶກກ່ຽວກັບການພັດທະນາຄອບຄົວ ໃຫ້ມີຄວາມຜາສຸກ, ຄອບຄົວຕົວແບບ, ຄອບຄົວວັດທະນະທຳ, ຄອບຄົວທີ່ມີຄວາມກ້າວໜ້າ, ຄອບຄົວທີ່ມີຄວາມສາມັກຄີ, ອົບອຸ່ນ, ຍຸຕິທຳ ແລະ ສີວິໄລ ໂດຍການອອກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ບັນດາກົດໝາຍທີ່ກ່ຽວຂ້ອງໃນການພັດທະນາຄອບຄົວ
ເຫດຜົນໃນການຮັກສາເດີມ	ມາດຕານີ້ຮັກສາເດີມ ເນື້ອໃນຂອງມາດຕາ 5/1 ຂອງກົດໝາຍວ່າດ້ວຍ ຄອບຄົວ ປີ 2008 ເນື່ອງຈາກວ່າເນື້ອໃນຂອງມາດຕານີ້ ແມ່ນສອດຄ່ອງກັບຮີດຄອງປະເພນີ ແລະ ການດຳລົງຊີວິດຂອງສັງຄົມໃນປັດຈຸບັນ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ໝວດທີ 2
ການໝັ້ນໝາຍ ແລະ ການສູ່ຂໍ

ມາດຕາ 145 ການໝັ້ນໝາຍ

ເມື່ອຄູ່ບ່າວສາວ ຫາກມັກຮັກກັນ ແຕ່ຍັງບໍ່ທັນມີຄວາມພ້ອມ ໃນການແຕ່ງດອງກັນເວລານັ້ນ ທັງສອງຝ່າຍ ກໍຈະເຮັດບົດບັນທຶກຕົກລົງ ກ່ຽວກັບການໝັ້ນໝາຍ ຕາມຮີດຄອງປະເພນີໄວ້ກ່ອນ ໂດຍຝ່າຍຊາຍ ຈະນຳເອົາຊັບສິນ, ວັດຖຸມີຄ່າ ໄປໄວ້ນຳ ຫຼື ບໍ່ໄວ້ນຳ ຝ່າຍຍິງ ກໍໄດ້.

ການໝັ້ນໝາຍ ຈະເຮັດ ຫຼື ບໍ່ເຮັດກໍໄດ້ ແຕ່ບໍ່ໃຫ້ມີຜົນສະທ້ອນດ້ານກົດໝາຍ.

ຈຸດປະສົງ	ເພື່ອກຳນົດບັນດາເງື່ອນໄຂ ໃຫ້ຄູ່ບ່າວສາວ ທີ່ມີຄວາມມັກຮັກ ແລະ ຢາກມີສາຍພົວພັນຄອບຄົວນຳກັນຢ່າງສົມບູນແບບນັ້ນກົດໝາຍສາມາດສ້າງເງື່ອນໄຂເພີ່ມໃຫ້ຄູ່ບ່າວສາວຕື່ມອີກ ແລະ ເພື່ອໃຫ້ຮູ້ກ່ຽວກັບຄວາມໝາຍ ແລະ ຜົນສະທ້ອນທາງດ້ານກົດໝາຍຂອງການໝັ້ນໝາຍ.
ຕົວຢ່າງ	**ກ** ຮັກມັກ ກັບ **ຂ** ເປັນເວລາ 3 ປີມາແລ້ວ ແຕ່ທັງສອງບໍ່ທັນມີເງື່ອນໄຂແຕ່ງດອງນຳກັນ ເພາະວ່າ **ກ** ຝ່າຍຊາຍຕ້ອງໄດ້ໄປປະຕິບັດພັນທະປ້ອງກັນຊາດ 2 ປີ ຈຶ່ງໄດ້ໝັ້ນໝາຍ **ຂ** ໄວ້ກ່ອນ. ໃນການໝັ້ນໝາຍມີພໍ່ແມ່, ເຖົ້າແກ່ຂອງ **ກ** ແລະ **ຂ** ພ້ອມທັງການຈັດຕັ້ງບ້ານ **ຄ** ເຂົ້າຮ່ວມ, ໄດ້ເຮັດບົດບັນທຶກການໝັ້ນໝາຍ, ຝ່າຍ **ກ** ໄດ້ມອບແຫວນຄຳ 1 ວົງ ໃຫ້ຝ່າຍ **ຂ** ເພື່ອເປັນການໝັ້ນໝາຍ.
ເຫດຜົນໃນການປັບປຸງ	ມາດຕານີ້ ປັບປຸງມາຈາກມາດຕາ 6 ແລະ ມາດຕາ 1/3 ຂໍ້ 2 ຂອງກົດໝາຍວ່າດ້ວຍຄອບຄົວ ປີ 2008 ເພື່ອໃຫ້ຮູ້ກ່ຽວກັບຜົນສະທ້ອນທາງດ້ານກົດໝາຍ ແລະ ໄດ້ເພີ່ມວັກ 2 ໃສ່ມາດຕານີ້. ຢູ່ໃນ ວັກ 2 ຂອງມາດຕານີ້ ການໝັ້ນໝາຍ ຈະເຮັດ ຫຼື ບໍ່ເຮັດກໍໄດ້ ແຕ່ບໍ່ໃຫ້ມີຜົນສະທ້ອນດ້ານກົດໝາຍ ຊຶ່ງມີຄວາມໝາຍວ່າ ການໝັ້ນໝາຍ ຍັງມີຜົນສະທ້ອນທາງດ້ານກົດໝາຍ ຊຶ່ງກຳນົດໄວ້ໃນມາດຕາ 146 ຂອງປະມວນກົດໝາຍແພ່ງ. ຖ້າບໍ່ເຮັດການໝັ້ນໝາຍ ກໍຈະບໍ່ມີຜົນສະທ້ອນທາງດ້ານກົດໝາຍ. ຖ້າມີການໝັ້ນໝາຍ ຕ້ອງໄດ້ປະຕິບັດ ຕາມການໝັ້ນໝາຍ ຕາມມາດຕາ 146 ຂອງປະມວນກົດໝາຍແພ່ງ, ເວັ້ນເສຍແຕ່ ບໍ່ໄດ້ເຮັດການໝັ້ນໝາຍ ຊຶ່ງບໍ່ມີຜົນສະທ້ອນທາງດ້ານກົດໝາຍຢ່າງໃດ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 1435-1438 ຂອງປະມວນກົດໝາຍແພ່ງ ແລະ ພານິດ ໄທ; ມາດຕາ 1297 ຂອງປະມວນກົດໝາຍແພ່ງ ເຢຍລະມັນ.
ມາດຕາອ້າງອີງ	ມາດຕາ 146, 147 ແລະ 150 ຂໍ້ 2 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ກົດໝາຍວ່າດ້ວຍຄອບຄົວ ປີ 2008 ໄດ້ກຳນົດກ່ຽວກັບມາດຕາການໝັ້ນໝາຍ ເປັນຄັ້ງທຳອິດ (ກົດໝາຍວ່າດ້ວຍຄອບຄົວ ປີ 1990 ບໍ່ໄດ້ກຳນົດໄວ້)

ມາດຕາ 146 ການບໍ່ປະຕິບັດຕາມການໝັ້ນໝາຍ

ໃນກໍລະນີທີ່ມີການໝັ້ນໝາຍ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 145 ຂອງປະມວນກົດໝາຍສະບັບນີ້ ຖ້າຫາກຝ່າຍຊາຍ ລະເມີດການໝັ້ນໝາຍ ໂດຍບໍ່ມີເຫດຜົນພຽງພໍແລ້ວ ຊັບສິ່ງຂອງ ຫຼື ວັດຖຸມີຄ່າ ທີ່ເອົາໄປໄວ້ນຳຝ່າຍຍິງ ຕາມການຕົກລົງນັ້ນ ກໍໃຫ້ຕົກເປັນຂອງຝ່າຍຍິງ. ໃນກໍລະນີທີ່ຍັງບໍ່ທັນໄດ້ເອົາໄປໄວ້ນຳຝ່າຍ ຍິງ, ຝ່າຍຊາຍ ຕ້ອງເອົາຊັບສິ່ງຂອງ ຫຼື ວັດຖຸມີຄ່າ ມາມອບໃຫ້ຝ່າຍຍິງ ຕາມການຕົກລົງ.

ໃນກໍລະນີທີ່ຝ່າຍຍິງ ຫາກເປັນຜູ້ລະເມີດການໝັ້ນໝາຍ ໂດຍບໍ່ມີເຫດຜົນພຽງພໍແລ້ວ ຊັບສິ່ງຂອງ ຫຼື ວັດຖຸມີຄ່າ ທີ່ຝ່າຍຊາຍ ໄດ້ເອົາມາໄວ້ນຳ ຝ່າຍຍິງ ກໍຕ້ອງສົ່ງຄືນໃຫ້ແກ່ຝ່າຍຊາຍ. ໃນກໍລະນີທີ່ ຝ່າຍຊາຍ ຍັງບໍ່ທັນໄດ້ເອົາຊັບສິ່ງຂອງ ຫຼື ວັດຖຸມີຄ່າ ມາໄວ້ນຳຝ່າຍຍິງ ຕາມການຕົກລົງນັ້ນ ກໍຈະຕົກໄປ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ ວິທີແກ້ໄຂ ຈັດການໃນກໍລະນີເກີດມີຂໍ້ຂັດແຍ່ງ ກ່ຽວກັບຊັບສິນໃນເວລາໝັ້ນໝາຍ (ຊັບສິ່ງຂອງ ຫຼື ວັດຖຸມີຄ່າ ທີ່ເອົາໄປໄວ້ ຫຼື ບໍ່ທັນເອົາໄປໄວ້ນຳຝ່າຍຍິງ.
ຕົວຢ່າງ	1. **ກ** ໝັ້ນ ກັບ **ຂ** ໂດຍເອົາສາຍຄໍຄຳໜັກ 10 ບາດ ແລະ ແຫວນເພັດ 16 ກະຣັດ ໄປໄວ້ນຳ **ຂ.** ໃນເວລາຕໍ່ມາ **ກ** ໄປແຕ່ງດອງກັບ **ຄ** ເຮັດໃຫ້ **ຂ** ພ້ອມດ້ວຍພໍ່ແມ່, ຍາດຕິພີ່ນ້ອງ ເສື່ອມເສຍກຽດສັກສີ, ສະນັ້ນ **ຂ** ໄດ້ເອົາສາຍຄໍຄຳໜັກ 10 ບາດ ແລະ ແຫວນເພັດ 16 ກະຣັດເປັນຂອງຕົນ ໂດຍອ້າງເຫດຜົນວ່າ **ກ** ເຈົ້າຂອງຊັບດັ່ງກ່າວ ໄດ້ລະເມີດການໝັ້ນໝາຍ. 2. **ກ** ໝັ້ນ ກັບ **ຂ** ໂດຍເອົາສາຍຄໍຄຳໜັກ 10 ບາດ ແລະ ແຫວນເພັດ 16 ກະຣັດ ໄປໄວ້ນຳ **ຂ.** ໃນເວລາຕໍ່ມາ **ຂ** ໄປແຕ່ງດອງກັບ **ຍ. ກ** ຮຽກເອົາສາຍຄໍຄຳໜັກ 10 ບາດ ແລະ ແຫວນເພັດ 16 ກະຣັດຄືນຈາກ **ຂ** ໂດຍອ້າງເຫດຜົນວ່າ **ຂ** ໄດ້ລະເມີດການໝັ້ນໝາຍ.
ເຫດຜົນໃນການປັບປຸງ	ມາດຕານີ້ ປັບປຸງມາຈາກມາດຕາ 7 ຂອງກົດໝາຍວ່າດ້ວຍຄອບຄົວ ປີ 2008 ເພື່ອໃຫ້ເຫັນການບໍ່ປະຕິບັດຕາມການໝັ້ນໝາຍ ແລະ ການສູ່ຂໍ ຈຶ່ງຈຳເປັນຕ້ອງ ໄດ້ແຍກເນື້ອໃນ ທີ່ໄດ້ກຳນົດການທົດແທນ ຄວາມເສັຍຫາຍ ເນື່ອງຈາກບໍ່ປະຕິບັດ ຕາມການໝັ້ນໝາຍ ແລະ ການສູ່ຂໍ ໃວ້ໃນມາດຕາດຽວ ອອກເປັນຂອງແຕ່ລະມາດຕາ. ປັບປຸງ ຊື່ ຫົວຂໍ້ ມາດຕາ: ເນື່ອງຈາກຊື່ ຫົວຂໍ້ ກຳນົດແຕ່ວ່າ ການໃຊ້ແທນ ແຕ່ເນື້ອໃນຍັງກຳນົດການສົ່ງມອບຄືນ ຊັບທີ່ຝ່າຍຊາຍໄດ້ມອບໃຫ້ຝ່າຍຍິງ ໃນເວລາມາໝັ້ນໝາຍຄືນໃຫ້ກັນ. ເຖິງຢ່າງໃດກໍຕາມ, ເພື່ອບໍ່ໃຫ້ເປັນການສັບສົນ ເລີຍກຳນົດສັ້ນໆວ່າ ການບໍ່ປະຕິບັດ ຕາມການໝັ້ນໝາຍ ເພາະເຫັນວ່າເນື້ອໃນ ຂອງມາດຕານີ້ ກຳນົດກ່ຽວກັບຜົນສະທ້ອນ ທີ່ຈະເກີດຂຶ້ນພາຍຫຼັງມີການລະ ເມີດ ແລະ ຍັງເຫັນວ່າ ເນື້ອໃນມັນກຳນົດໃນຕົວຢູ່ແລ້ວ ວ່າມີຜົນແນວໃດ.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງ ຂອງປະເທດອື່ນ	ມາດຕາ 1440 ຂອງປະມວນກົດໝາຍແພ່ງ ແລະ ພານິດ ໄທ;
ມາດຕາອ້າງອີງ	ມາດຕາ 145, 147 ແລະ 148 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 147 ການສູ່ຂໍ

ເມື່ອບ່າວ ສາວ ຫາກມັກຮັກ ແລະ ຕົກລົງຈະເອົາກັນເປັນ ຜົວ ເມຍ ແລ້ວ ຝ່າຍຊາຍກໍເອົາ ພໍ່ ແມ່, ເຖົ້າແກ່ ຫຼື ການຈັດຕັ້ງຂອງຕົນໄປສູ່ຂໍນຳ ພໍ່ ແມ່, ເຖົ້າແກ່ຂອງຝ່າຍຍິງ ຕາມຮີດຄອງປະເພນີ ເພື່ອຕົກລົງ ກ່ຽວກັບຄ່າດອງ ແລະ ພິທີແຕ່ງດອງ ຕາມຄວາມສາມາດ ແລະ ເງື່ອນໄຂຕົວຈິງຂອງຝ່າຍຍິງ ແລະ ຝ່າຍຊາຍ ໂດຍໃຫ້ເຮັດບົດບັນທຶກໄວ້ຢ່າງຖືກຕ້ອງ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນເຖິງຄວາມໝາຍ ແລະ ວິທີການ ຂອງການສູ່ຂໍ.
ຕົວຢ່າງ	**ກ** ແລະ **ຂ** ໄດ້ມັກຮັກກັນ ແລະ ຕົກລົງຈະເອົາກັນເປັນຜົວເມຍ, ຝ່າຍ **ກ** ໄດ້ເອົາພໍ່ແມ່, ເຖົ້າແກ່ ແລະ ການຈັດຕັ້ງ ຂອງຕົນ ມາສູ່ຂໍ ຝ່າຍຍິງ ນຳພໍ່ແມ່, ເຖົ້າແກ່ ແລະ ການຈັດຕັ້ງ ຕາມຮີດຄອງປະເພນີ, ທັງສອງຝ່າຍໄດ້ປຶກສາຫາ ລື ແລະ ຕົກລົງຄ່າດອງ 50.000.000 ກີບ ແລະ ຄຳສາມບາດ, ສຳລັບພິທີ ແຕ່ງດອງ ແລະ ຄ່າໃຊ້ຈ່າຍອື່ນໆ ໃຫ້ທັງສອງຝ່າຍ ຮັບຜິດຊອບຮ່ວມກັນ, ໃນພິທີໄດ້ເຮັດບົດບັນທຶກ ການສູ່ຂໍ, ນາຍບ້ານ, **ກ** ແລະ **ຂ**, ພໍ່ແມ່ ເຖົ້າແກ່ ຂອງທັງສອງຝ່າຍ ໄດ້ລົງລາຍເຊັນ ບົດບັນທຶກດັ່ງກ່າວ ເປັນຫຼັກຖານ.
ເຫດຜົນໃນການຮັກສາເດີມ	ມາດຕານີ້ ຮັກສາເດີມ ມາດຕາ 6/1 ຂອງກົດໝາຍວ່າດ້ວຍຄອບຄົວ ປີ 2008.

ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 145 ,146, 148 ແລະ 182 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 148 ການໃຊ້ແທນຄວາມເສຍຫາຍເນື່ອງຈາກການບໍ່ປະຕິບັດຕາມການສູ່ຂໍ

ໃນກໍລະນີ ຝ່າຍໃດໜຶ່ງ ຫາກບໍ່ປະຕິບັດຕາມການສູ່ຂໍ ໂດຍບໍ່ມີເຫດຜົນພຽງພໍ ແລະ ສ້າງຄວາມເສຍຫາຍ ຕໍ່ກຽດສັກສີຂອງອີກຝ່າຍໜຶ່ງ ຫຼື ມີການໃຊ້ຈ່າຍ ເຂົ້າໃນການກະກຽມການແຕ່ງດອງແລ້ວ ຝ່າຍທີ່ບໍ່ປະຕິບັດນັ້ນ ກໍຈະໄດ້ຮັບຜິດຊອບໃຊ້ແທນຄ່າເສຍຫາຍ.

ຈຸດປະສົງ	ເພື່ອໃຫ້ຮູ້ກ່ຽວກັບຄວາມຮັບຜິດຊອບ ທົດແທນຄ່າເສັຍຫາຍ ທີ່ເປັນຜົນສະທ້ອນ ອັນເນື່ອງມາຈາກການບໍ່ປະຕິບັດ ຕາມການສູ່ຂໍ.
ຕົວຢ່າງ	**ກ** ໄດ້ມາສູ່ຂໍ **ຂ** ແລ້ວ, ແຕ່ພໍຮອດມື້ນັດໝາຍ **ກ** ບໍ່ມາແຕ່ງດອງກັບ **ຂ** ໂດຍບໍ່ມີເຫດຜົນ ຊຶ່ງໄດ້ສ້າງຄວາມເສຍຫາຍ ຕໍ່ກຽດສັກສີ ຂອງຝ່າຍ **ຂ** ແລະ ຄ່າໃຊ້ຈ່າຍ ຈຳນວນ 30.000.000 ກີບ ໃນການກະກຽມ ພິທີແຕ່ງດອງ, **ກ** ທີ່ເປັນຝ່າຍລະເມີດ ການສູ່ຂໍ ຕ້ອງຮັບຜິດຊອບ ໃຊ້ແທນຄວາມເສຍຫາຍທັງໝົດໃຫ້ແກ່ **ຂ.**
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກມາດຕາ 7 ວັກ 3 ຂອງກົດໝາຍວ່າດ້ວຍຄອບຄົວ ປີ 2008 ທີ່ກຳນົດ ການໃຊ້ແທນ ຄວາມເສຍຫາຍ ຈາກການບໍ່ປະຕິບັດ ຕາມການໝັ້ນໝາຍ ແລະ ການສູ່ຂໍ ໄວ້ໃນມາດຕາດຽວ ຊຶ່ງເຫັນວ່າ ມັນອາດຈະສັບສົນ ຈຶ່ງແຍກເອົາການບໍ່ປະຕິບັດຕາມການໝັ້ນໝາຍ ແລະ ການສູ່ຂໍນັ້ນ ອອກເປັນ ມາດຕາໃຜລາວ. ຫົວຂໍ້: ໄດ້ປັບປຸງຄຳວ່າ ທົດແທນມາເປັນ ໃຊ້ແທນ ໃຫ້ເປັນເອກະພາບ ກັບພາກ ອື່ນໆ ໃນປະມວນກົດໝາຍແພ່ງ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 145,146 ແລະ 147 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 149 ການຮ່ວມປະເວນີກັນກ່ອນການເປັນ ຜົວ ເມຍ

ເມື່ອມີການຮ່ວມປະເວນີກັນກ່ອນການເປັນ ຜົວ ເມຍ, ຖ້າຫາກຊາຍຊູ້ ບໍ່ເອົາຍິງຊູ້ເປັນເມຍແລ້ວ ຊາຍຊູ້ນັ້ນ ກໍຈະເສຍຄ່າຟື້ນຟູ, ປົວແປງຈິດໃຈ, ຄ່າທຳຂວັນຍິງຊູ້ ຫຼື ຄອບຄົວຂອງຍິງຊູ້ ຕາມຣີດຄອງປະເພນີ. ໃນກໍລະນີ ຍິງຊູ້ ຫາກບໍ່ເອົາຊາຍຊູ້ເປັນຜົວ ກໍຈະບໍ່ມີການເສຍຄ່າປົວແປງຈິດໃຈ, ຄ່າທຳຂວັນນັ້ນ ແຕ່ຢ່າງໃດ.

ໃນກໍລະນີທີ່ມີການຖືພາ ນອກຈາກຈະໄດ້ເສຍຄ່າທຳຂວັນແລ້ວ ຊາຍຊູ້ຍັງຈະຕ້ອງເສຍຄ່າ ອອກລູກ ຫຼື ຫູ້ລູກ, ຄ່າຢູ່ກິນ ແລະ ຮັບຜິດຊອບຄ່າໃຊ້ຈ່າຍທີ່ກ່ຽວຂ້ອງ.

ບໍ່ວ່າໃນກໍລະນີໃດກໍຕາມ ຊາຍຊູ້ມີພັນທະລ້ຽງດູລູກທີ່ເກີດມານັ້ນ ຈົນກວ່າຈະພົ້ນກະສຽນອາຍຸ.

ຈຸດປະສົງ	ເພື່ອກຳນົດຄວາມຮັບຜິດຊອບ ຂອງຊາຍຊູ້ ແລະ ຍິງຊູ້ ທີ່ມີການຮ່ວມປະເວນີກັນ ກ່ອນການເປັນ ຜົວ-ເມຍ ແລ້ວບໍ່ເອົາກັນ ເປັນຜົວເມຍ ຕ້ອງມີຄວາມຮັບຜິດຊອບ ຕໍ່ຄວາມເສຍຫາຍເກີດຂຶ້ນ. ຖ້າຍິງຊູ້ມີການຖືພາ ຊາຍຊູ້ ຕ້ອງຮັບຜິດຊອບ ຄ່າເສຍຫາຍ ທີ່ໄດ້ກຳນົດໄວ້ໃນວັກທີສອງ ຂອງມາດຕາ 149 ແລະ ຕ້ອງມີພັນທະ ລ້ຽງດູລູກ ທີ່ເກີດມາຈົນກ່ວາຈະພົ້ນກະສຽນອະຍຸ.
ຕົວຢ່າງ	1. **ກ** ແລະ **ຂ** ມີຄວາມມັກຮັກກັນ ເປັນຊາຍຊູ້ ຍິງຊູ້ ຢູ່ກິນນຳກັນ ໂດຍບໍ່ໄດ້ມີການໝັ້ນໝາຍ, ຕໍ່ມາ **ກ** ໄດ້ໄປຈົດທະບຽນການແຕ່ງດອງກັບ **ຄ** (ຍິງຄົນໃໝ່), **ຂ** ຍິງຊູ້ ຈຶ່ງຮ້ອງຟ້ອງໃຫ້ **ກ** (ຊາຍຊູ້) ຮັບຜິດຊອບ ຄ່າປ່ວຍແປງຈິດໃຈ 30.000.000 ກີບ ແລະ ຄ່າທຳຂວັນ 10.000.000 ກີບ. ແຕ່ໃນກໍລະນີ **ຂ** (ຍິງຊູ້) ບໍ່ເອົາ **ກ** (ຊາຍຊູ້) ເປັນຜົວແລ້ວ, **ຂ (ຍິງຊູ້)** ບໍ່ສາມາດຮຽກຮ້ອງເອົາຄ່າຟື້ນຟູ, ຄ່າປ່ວຍແປງຈິດໃຈ, ຄ່າທຳຂວັນໃຫ້ **ກ (ຊາຍຊູ້).** 2. **ຈາກ ຂໍ້ 1 ເທິງນີ້, ໃນກໍລະນີ ຂ ຖືພາ,** ນອກຈາກ ຄ່າປ່ວຍແປງຈິດໃຈ 30.000.000 ກີບ ແລະ ຄ່າທຳຂວັນ 10.000.000 ກີບ **ກ** (ຊາຍຊູ້) ຍັງຕ້ອງຮັບຜິດຊອບ ເສຍຄ່າອອກລູກ ຫຼື ຫູ້ລູກ, ຄ່າຢູ່ກິນ ແລະ ຄ່າໃຊ້ຈ່າຍອື່ນທີ່ກ່ຽວຂ້ອງ. **ກ** ຍັງມີພັນທະ ໃນການລ້ຽງດູລູກ ທີ່ເກີດມານັ້ນ ຈົນກວ່າຈະພົ້ນກະສຽນອາຍຸ 18 ປີ.
ເຫດຜົນໃນການປັບປຸງ	ມາດຕານີ້ ປັບປຸງມາຈາກ ມາດຕາ 8 ຂອງກົດໝາຍວ່າດ້ວຍຄອບຄົວ,ມາດຕານີ້ ບໍ່ພຽງແຕ່ນຳໃຊ້ ກັບກໍລະນີ ① ຍິງຊາຍ ກໍຄື **ກ** ແລະ **ຂ** ມີອາຍ ທີ່ສາມາດແຕ່ງດອງໄດ້ (18ປີ), ຢູ່ໃນສະພາບ ທີ່ສາມາດແຕ່ງດອງ ເມື່ອໃດກໍໄດ້ຖ້າຕ້ອງການ, ໃຫ້ຄວາມຫວັງ ແກ່ຝ່າຍກົງກັນຂ້າມ ວ່າຈະແຕ່ງ ແລ້ວຮ່ວມປະເວນີ ແຕ່ສຸດທ້າຍບໍ່ແຕ່ງ (ບໍ່ຈົດທະບຽນ) ແຕ່ຍັງນຳໃຊ້ກັບກໍລະນີ ② ຍິງ ແລະ ຊາຍ ຍັງບໍ່ທັນຮອດ 18 ປີ ຕ່າງຝ່າຍ ກໍຮູ້ວ່າ ບໍ່ສາມາດແຕ່ງດອງໄດ້ເທື່ອ ແຕ່ຮວມປະເວນີນຳກັນຈົນມີລູກ, ຫຼືວ່າຈະເປັນກໍລະນີ (ຂັດກັບປະມວນອາຍາ) ແລະ ③ ມີການໝັ້ນໝາຍ ເປັນທີ່ຮຽບຮ້ອຍແລ້ວ ແຕ່ຍັງບໍ່ທັນໄດ້ສູ່ຂໍ ແລະ ບໍ່ທັນຕົກລົງແຕ່ງດອງກັນເທື່ອ ເຊິ່ງໄດ້ຮວມປເວນີກັນກ່ອນ, ສຸດທ້າຍບໍ່ແຕ່ງ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 3 ຂໍ້ 7, 215, 216, ແລະ 217 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ໝວດທີ 3
ການແຕ່ງດອງ
ກ. ເງື່ອນໄຂ ແລະ ລະບຽບການແຕ່ງດອງ

ມາດຕາ 150 ເງື່ອນໄຂຂອງການແຕ່ງດອງ

ຍິງ ແລະ ຊາຍ ທີ່ຈະແຕ່ງດອງເອົາກັນເປັນ ຜົວ ເມຍ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ມີອາຍຸ ແຕ່ ສິບແປດປີຂຶ້ນໄປ;
2. ມີຄວາມມັກຮັກ, ການຕົກລົງ ແລະ ຄວາມສະໝັກໃຈຂອງຄູ່ບ່າວສາວ;
3. ເປັນໂສດ, ເປັນຮ້າງ ຫຼື ເປັນໝ້າຍ ໂດຍມີເອກະສານຢັ້ງຢືນຢ່າງຖືກຕ້ອງ.

ຈຸດປະສົງ	ເພື່ອກຳນົດ ບັນດາເງື່ອນໄຂຂອງຍິງ-ຊາຍ ທີ່ຈະແຕ່ງດອງເອົາກັນເປັນຜົວ-ເມຍ.
ຕົວຢ່າງ	**ກ** ອາຍຸ 25 ປີ ກັບ **ຂ** ທີ່ມີ ອາຍຸ 20 ປີ ໄດ້ມັກຮັກກັນມາໄດ້ຫຼາຍປີ ແລະ ໄດ້ຕົກລົງ ຢາກແຕ່ງດອງກັນ, ດ້ວຍຄວາມສະມັກໃຈ ໄປຈົດທະບຽນຄອບຄົວນຳກັນ ຢູ່ອົງການຈັດຕັ້ງ ທີ່ກ່ຽວຂ້ອງເຫັນວ່າ ການແຕ່ງດອງທັງສອງສາມາດເກີດຂຶ້ນ ໄດ້, ຖ້າຍິງ ຫຼື ຊາຍ ເປັນຮ້າງ ຫຼື ເປັນໝ້າຍ ຕ້ອງມີເອກະສານ ຢັ້ງຢືນຈາກ ພາກສ່ວນທີ່ກ່ຽວຂ້ອງ.
ເຫດຜົນໃນການປັບປຸງ	ມາດຕານີ້ ປັບປຸງມາຈາກ ມາດຕາ 9 ຂອງກົດໝາຍວ່າດ້ວຍຄອບຄົວ ປີ 2008 ຊຶ່ງໄດ້ລຶບ ຂໍ້ 4 ອອກ (ບໍ່ເປັນບ້າ ເສຍຈິດ ຫຼື ບໍ່ເປັນພະຍາດຮ້າຍແຮງ ຫຼື ຕິດແປດ) ເນື່ອງຈາກວ່າ ຂໍ້ນີ້ບໍ່ແມ່ນເງື່ອນໄຂຕົ້ນຕໍ ຂອງເງື່ອນໄຂ ການເອົາກັນເປັນຜົວເມຍ. ບາງກໍລະນີ ກໍສາມາດເອົາກັນ ເປັນຜົວເມຍໄດ້.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງ ຂອງປະເທດອື່ນ	ມາດຕາ 731 - 739 ຂອງປະມວນກົດໝາຍແພ່ງຍີປຸ່ນ; ມາດຕາ 9 - 10 ຂອງກົດໝາຍວ່າດ້ວຍຄອບຄົວ ຫວຽດນາມ; ມາດຕາ 1148 - 1460 ຂອງປະມວນກົດໝາຍແພ່ງ ແລະ ພານິດ ໄທ; ມາດຕາ 948 - 955 ຂອງປະມວນກົດໝາຍແພ່ງກຳປູເຈຍ.
ມາດຕາອ້າງອີງ	ມາດຕາ 152 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 151 ການບໍ່ອະນຸຍາດໃຫ້ແຕ່ງດອງ

ການແຕ່ງດອງ ຈະບໍ່ອະນຸຍາດໄດ້ ໃນກໍລະນີ ດັ່ງນີ້:

1. ບຸກຄົນທີ່ເປັນເພດດຽວກັນ;

2. ບຸກຄົນທີ່ ເປັນຍາດໃກ້ຊິດ ຄື ພໍ່ ແມ່, ປູ່ ຍ່າ, ພໍ່ເຖົ້າ ແມ່ເຖົ້າ ຂຶ້ນໄປ ກັບ ລູກ, ຫຼານ, ເຫຼນ ຕ່ຳໆລົງມາ; ລະຫວ່າງ ພໍ່ລ້ຽງ, ແມ່ລ້ຽງ ກັບ ລູກລ້ຽງ; ລະຫວ່າງ ພໍ່ນ້າ, ແມ່ນ້າ ກັບ ລູກນ້າ; ລະຫວ່າງ ລູກຄົງ ກັບ ລູກຄົງ, ກັບລູກລ້ຽງ, ກັບລູກນ້າ; ລະຫວ່າງ ລູກລ້ຽງ ກັບ ລູກລ້ຽງ, ກັບລູກນ້າ; ລະຫວ່າງ ລຸງ, ປ້າ,ອາວ, ອາ, ນ້າບ່າວ, ນ້າສາວ ກັບ ຫຼານ.

ສຳລັບ ລູກນ້າກັບລູກນ້ານັ້ນ ສາມາດເອົາກັນເປັນ ຜົວ ເມຍໄດ້ ໃນກໍລະນີທີ່ ພໍ່ ແມ່ ໄດ້ຢ່າຮ້າງກັນແລ້ວ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນກໍລະນີໃດແດ່ ທີ່ເປັນຂໍ້ຫ້າມ ໃນການແຕ່ງດອງ ແລະ ຂອບ ເຂດ ຂອງຜູ້ທີ່ບໍ່ສາມາດແຕ່ງດອງໄດ້.
ຕົວຢ່າງ	1. **ກ** ແລະ **ຂ** ເປັນເພດດຽວກັນໄດ້ມັກຮັກ ແລະ ຢູ່ກິນນຳກັນ ດັ່ງນັ້ນ **ກ** ແລະ **ຂ** ຈຶ່ງໄດ້ໄປຂໍຈົດທະບຽນການແຕ່ງດອງ ນຳພະແນກພາຍໃນ ກໍລະນີນີ້ ແມ່ນອີງຕາມມາດຕາ 151 ຂອງປະມວນກົດໝາຍແພ່ງ ແມ່ນຈະບໍ່ອານຸຍາດໃຫ້ **ກ** ແລະ **ຂ** ຈົດທະບຽນການແຕ່ງດອງໄດ້.

	2. **ກ** ເປັນແມ່ຮ້າງ ມີລູກໜຶ່ງຄົນຊື່ **ຂ, ກ** ໄດ້ມາແຕ່ງດອງ ກັບ **ຄ** ສະນັ້ນ **ຄ** ຈຶ່ງກາຍເປັນພໍ່ນ້າ ຂອງ **ຂ**, ຢູ່ຕໍ່ມາ **ກ** ໄດ້ເສຍຊີວິດແລ້ວ, **ຄ** ແລະ **ຂ** ມັກຮັກກັນ ແລະ ຕ້ອງການແຕ່ງດອງກັນ, ຕາມປະມວນກົດໝາຍແພ່ງ ແມ່ນບໍ່ອະນຸຍາດໃຫ້ **ຄ** ແລະ **ຂ** ແຕ່ງດອງກັນ ຍ້ອນວ່າ ພວກກ່ຽວ ເປັນພໍ່ນ້າ ແລະ ລູກນ້າກັນ.
ເຫດຜົນໃນການປັບປຸງ	ມາດຕານີ້ ປັບປຸງມາຈາກ ມາດຕາ 10 ກົດໝາຍວ່າດ້ວຍ ຄອບຄົວ ປີ 2008 ຊຶ່ງໄດ້ລຶບ ບາງຄຳສັບໃນ ຂໍ້ 1 ຂອງມາດຕາ 10 ອອກ (ເປັນບ້ານເສຍຈິດ ຫຼື ເປັນພະຍາດຮ້າຍແຮງ ຫຼື ຕິດແປດ ທີ່ຈະເປັນອັນຕະລາຍ ຕໍ່ຊີວິດ ຫຼື ສຸຂະພາບ ຂອງຜົວ ຫຼື ເມຍ ຫຼື ລູກ) ເນື່ອງຈາກວ່າ ການເປັນບ້າເສຍຈິດ ຫຼື ເປັນພະຍາດຮ້າຍແຮງ ຫຼື ຕິດແປດ ທີ່ຈະເປັນອັນຕະລາຍ ຕໍ່ຊີວິດ ຫຼື ສຸຂະພາບ ຂອງຜົວ ຫຼື ເມຍ ຫຼື ລູກ ກໍຍັງສາມາດເອົາກັນເປັນຜົວເມຍ ຕາມເງື່ອນໄຂທີ່ໄດ້ກຳນົດໄວ້ ໃນມາດຕາ 150 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 731 - 739 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ; ມາດຕາ 8 ແລະ 9 ຂອງກົດໝາຍແຕ່ງດອງ ແລະ ຄອບຄົວ ຫວຽດນາມ ປີ 2014; ມາດຕາ 1448 - 1452 ຂອງປະມວນກົດໝາຍແພ່ງ ແລະ ພານິດໄທ; ມາດຕາ 948 - 954 ຂອງປະມວນກົດໝາຍແພ່ງກຳປູເຈຍ.
ມາດຕາອ້າງອີງ	ມາດຕາ 150 ແລະ 152 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.ກ່ຽວກັບຖ້າການແຕ່ງດອງ ໄດ້ຮັບອະນຸຍາດ ໃນກໍລະນີ ຂອງລູກນ້າເມື່ອ ພໍ່ ຫຼື ແມ່ໄດ້ເສຍຊີວິດ

ມາດຕາ 152 ການຈົດທະບຽນການແຕ່ງດອງ

ຍິງ ແລະ ຊາຍ ທີ່ມີຈຸດປະສົງແຕ່ງດອງນຳກັນ ຕ້ອງເຮັດຄຳຮ້ອງເປັນລາຍລັກອັກສອນ ແລ້ວ ຍື່ນຕໍ່ເຈົ້າໜ້າທີ່ທະບຽນຄອບຄົວຂອງຫ້ອງການພາຍໃນຂັ້ນເມືອງ ບ່ອນຄູ່ບ່າວສາວອາໄສຢູ່ ຫຼື ບ່ອນຢູ່ ຂອງຝ່າຍໃດໜຶ່ງ.

ຖ້າເຫັນວ່າ ຍິງ ແລະ ຊາຍນັ້ນ ຫາກມີເງື່ອນໄຂຄົບຖ້ວນແລ້ວ ເຈົ້າໜ້າທີ່ທະບຽນຄອບຄົວ ກໍຈະໃຫ້ ພວກກ່ຽວເຂົ້າມາຈົດທະບຽນການແຕ່ງດອງ ໂດຍຊ້ອງໜ້າພະຍານສາມຄົນ.

ຍິງ ແລະ ຊາຍ ຈະມີຖານະເປັນ ຜົວ ເມຍ ກັນ ນັບແຕ່ວັນຈົດທະບຽນການແຕ່ງດອງ ເປັນຕົ້ນໄປ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ວ່າ ຄອບຄົວ ແລະ ສາຍພົວພັນຄອບຄົວ ຈຳເປັນຕ້ອງມີສຳມະໂນຄົວ ຢັ້ງຢືນຢ່າງຖືກຕ້ອງ (ມາດຕາ 137 ແລະ 138), ແລະ ເພື່ອໃຫ້ຮັບຮູ້ ກ່ຽວກັບຂັ້ນຕອນ, ວິທີການ ແລະ ການດຳເນີນການ ຈົດທະບຽນແຕ່ງດອງ.
ຕົວຢ່າງ	**ກ** ແລະ **ຂ** ມີຄວາມມັກຮັກກັນ ແລະ ຢາກໃຊ້ຊີວິດຮ່ວມກັນ ແບບຜົວເມຍ ຈາກນັ້ນ ພວກກ່ຽວທັງສອງ ໄດ້ເຂົ້າໄປຫາຫ້ອງການພະແນກພາຍໃນເມືອງ ທີ່ພວກຕົນຢູ່, ເພື່ອປະກອບເອກະສານ ຂໍຈົດທະບຽນແຕ່ງດອງກັນ, ພາຍຫຼັງທີ່ **ກ** ແລະ **ຂ** ໄດ້ຍື່ນເອກະສານຫາຫ້ອງພະແນກພາຍໃນແລ້ວ ພະນັກງານຕ້ອງກວດເບິ່ງວ່າ **ກ** ແລະ **ຂ** ທີ່ມີຈຸດປະສົງຢາກຂໍແຕ່ງງານນັ້ນ ມີເງື່ອນໄຂຄົບຖ້ວນບໍ, ຖ້າມີເຈົ້າໜ້າທີ່ທະບຽນຄອບຄົວ ກໍຈະໃຫ້ **ກ** ແລະ **ຂ** ເຂົ້າມາຈົດທະບຽນການແຕ່ງດອງໂດຍຊ້ອງໜ້າພີ່ນ້ອງ ທັງສອງຝ່າຍ ແລະ ພະຍານສາມຄົນ.

ເຫດຜົນໃນການປັບປຸງ	ມາດຕານີ້ ປັບປຸງເນື້ອໃນ ຂອງມາດຕາ 11 ແລະ 12 ວັກ 3 ກົດໝາຍວ່າດ້ວຍ ຄອບຄົວ ປີ 2008 ແລະ ປ່ຽນຄຳສັບຈາກ ຄູ່ບ່າວ-ສາວ ມາເປັນ ຍິງ ແລະ ຊາຍ ແລະ ໄດ້ລຶບວັກທີສອງ ຂອງ ມາດຕາ 11 ອອກ ເພາະວ່າ ມາດຕາ 16 ກົດໝາຍວ່າດ້ວຍ ທະບຽນຄອບຄົວ ປີ 2018 ໄດ້ກຳນົດຂັ້ນຕອນລະອຽດ ກ່ຽວກັບການຈົດທະບຽນ ການແຕ່ງດອງໄວ້ແລ້ວ.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງ ຂອງປະເທດອື່ນ	ມາດຕາ 1457-1458 ຂອງປະມວນກົດໝາຍແພ່ງ ແລະ ພານິດໄທ; ມາດຕາ 9 ຂອງກົດໝາຍແຕ່ງດອງ ແລະ ຄອບຄົວ ຫວຽດນາມ 2014; ມາດຕາ 955 ຂອງປະມວນກົດໝາຍແພ່ງກຳປູເຈຍ;
ມາດຕາອ້າງອີງ	ມາດຕາ 16 ຂອງກົດໝາຍວ່າດ້ວຍການຈົດທະບຽນຄອບຄົວ ປີ 2018; ມາດຕາ 150 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 153 ພິທີແຕ່ງດອງ

ພິທີແຕ່ງດອງ ຈະເຮັດ ຫຼື ບໍ່ເຮັດກໍໄດ້, ຈະເຮັດພ້ອມ ຫຼື ລຸນຫຼັງ ການຈົດທະບຽນແຕ່ງດອງ ກໍໄດ້ ແຕ່ບໍ່ໃຫ້ມີຜົນສະທ້ອນທາງດ້ານກົດໝາຍ.

ໃນກໍລະນີທີ່ມີການຈັດພິທີແຕ່ງດອງນັ້ນ ກໍໃຫ້ສອດຄ່ອງກັບຮີດຄອງປະເພນີອັນດີງາມຂອງຊາດ ແລະ ປະຢັດມັດທະຍັດ.

ຈຸດປະສົງ	ເພື່ອກຳນົດການຈັດພິທີແຕ່ງດອງ ທີ່ໄດ້ຈົດທະບຽນ ແຕ່ງດອງສຳເລັດ ແມ່ນ ຄວາມສະມັກໃຈ ຂອງຄູ່ບ່າວສາວ ໂດຍບໍ່ຂຶ້ນກັບປະເພນີປະຕິບັດ ແລະ ບັນດາ ລະບຽບການອັນໃດ. ຄູ່ບ່າວ-ສາວ ຈະຈັດພິທີແຕ່ງດອງ ຕາມຮູບແບບໃດກໍໄດ້ ແຕ່ຕ້ອງໃຫ້ສອດຄ່ອງ ກັບຮີດຄອງປະເພນີອັນດີງາມຂອງຊາດ ແລະ ປະຢັດ ມັດທະຍັດ.
ຕົວຢ່າງ	1. **ກ** ແລະ **ຂ** ໄດ້ຮັບໃບທະບຽນ ແຕ່ງດອງສຳເລັດແລ້ວ, **ກ** ໄດ້ຮຽກເຊີນພໍ່ແມ່, ເຖົ້າແກ່ ແລະ ເພື່ອນ ມິດສະຫາຍ ທັງສອງຝ່າຍ ຈັດພິທີບາສີ ສູ່ຂັວນ, ຈັດງານລ້ຽງ ສະເຫຼີມສະຫຼອງ ແລະ ມ່ວນຊື່ນຕາມອັດທະຍາໄສ. 2. ພາຍຫຼັງໄດ້ຮັບທະບຽນແຕ່ງດອງແລ້ວ ຄູ່ບ່າວ-ສາວ ໄດ້ເຊີນຍາດຕິພີ່ນ້ອງ ທັງສອງຝ່າຍ ມາຮັບຮູ້ ຄູ່ຜົວ-ເມຍໃໝ່ ຕາມຮີດຄອງປະເພນີ ແລະ ຕາມຖານະທາງດ້ານເສດຖະກິດ ຂອງຄູ່ສ້າງຄອບຄົວໃໝ່.
ເຫດຜົນໃນການປັບປຸງ	ມາດຕານີ້ ປັບປຸງມາຈາກ ມາດຕາ 12 ວັກ 1 ແລະ ວັກ 2 ຂອງກົດໝາຍວ່າດ້ວຍ ຄອບຄົວ ປີ 2008.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງ ຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 152 ວັກ 3 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ຂ. ການແຕ່ງດອງທີ່ພົວພັນກັບຕ່າງປະເທດ

ມາດຕາ 154 ການແຕ່ງດອງ ລະຫວ່າງ ພົນລະເມືອງລາວ ກັບ ຄົນຕ່າງປະເທດ, ຄົນຕ່າງດ້າວ ແລະ ຄົນບໍ່ມີສັນຊາດ ຢູ່ ສປປ ລາວ

ຄົນຕ່າງປະເທດ, ຄົນຕ່າງດ້າວ ແລະ ຄົນບໍ່ມີສັນຊາດ ມີ ສິດ ແລະ ພັນທະ ຄືກັນກັບພົນລະເມືອງລາວ ກ່ຽວກັບສາຍພົວພັນແຕ່ງດອງ ແລະ ຄອບຄົວ.

ການແຕ່ງດອງ ລະຫວ່າງ ພົນລະເມືອງລາວ ກັບ ຄົນຕ່າງປະເທດ, ຄົນຕ່າງດ້າວ ຫຼື ຄົນບໍ່ມີສັນຊາດ ຢູ່ ສປປ ລາວ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນມາດຕາ 150 ຫາ 152 ຂອງປະມວນກົດໝາຍສະບັບນີ້.

ສຳລັບການຈົດທະບຽນການແຕ່ງດອງ ລະຫວ່າງ ພົນລະເມືອງລາວ ກັບຄົນຕ່າງດ້າວ, ຄົນຕ່າງປະເທດ ຫຼື ຄົນບໍ່ມີສັນຊາດ ຢູ່ ສປປ ລາວ ໃຫ້ດຳເນີນຢູ່ພະແນກພາຍໃນຂັ້ນແຂວງ ບ່ອນຄູ່ບ່າວສາວອາໄສຢູ່ ຫຼື ບ່ອນຢູ່ຂອງຝ່າຍໃດໜຶ່ງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍທະບຽນຄອບຄົວ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ ສິດ ແລະ ພັນທະຂອງພົນລະເມືອງລາວ ສາມາດແຕ່ດອງກັບ ຄົນຕ່າງປະເທດ, ຄົນຕ່າງດ້າວ, ຄົນບໍ່ມີສັນຊາດ ຢູ່ ສປປ ລາວ ແລະ ຂັ້ນຕອນ ຂອງການການຈົດທະບຽນແຕ່ງດອງ ໃຫ້ດຳເນີນຢູ່ພະແນກພາຍໃນຂັ້ນແຂວງ.
ຕົວຢ່າງ	**ກ** ສັນຊາດ **ຄ** ໄດ້ຮັກມັກ ກັບ **ຂ** ສັນຊາດ **ງ,** ໄດ້ເຂົ້າໄປຈົດທະບຽນ ແຕ່ງດອງນຳຫ້ອງການ ຈົດທະບຽນຄອບຄົວຂອງແຂວງ ບ່ອນພວກກ່ຽວອາໃສຢູ່. ພາຍຫຼັງໄດ້ຮັບທະບຽນແຕ່ງດອງແລ້ວ ຄູ່ບ່າວ-ສາວ ກໍໄດ້ຈັດພິທີແຕ່ງດອງ ຕາມຮີດຄອງປະເພນີ **ງ.**
ເຫດຜົນໃນການປັບປຸງ	ມາດຕານີ້ ປັບປຸງມາຈາກມາດຕາ 47 ຂອງກົດໝາຍວ່າດ້ວຍຄອບຄົວ ປີ 2008 ເພື່ອໃຫ້ມີເນື້ອໃນສັ້ນກະທັດຮັດ ແຕ່ໄດ້ເນື້ອໃນຄົບຖ້ວນ ແລະ ແຍກໃຫ້ເຫັນ ສະເພາະການແຕ່ງດອງ ລະຫວ່າງ ພົນລະເມືອງລາວ ກັບ ຄົນຕ່າງປະເທດ, ຄົນຕ່າງດ້າວ, ຄົນບໍ່ມີສັນຊາດ ຢູ່ ສປປ ລາວ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ບັນຫາທີ່ພົວກັບຄົນຕ່າງປະເທດ ໃນຫຼາຍໆປະເທດ ແມ່ນກຳນົດໄວ້ໃນ ກົດໝາຍລະຫວ່າງຊາດ ສ່ວນບຸກຄົນ (private international law) ມາດຕາ 24 ຂອງກົດໝາຍວ່າດ້ວຍ ຫຼັກການທົ່ວໄປ ໃນການນຳໃຊ້ກົດໝາຍ ເຊັ່ນ: ກົດໝາຍປະເທດ ຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 150-152 ແລະ 155 ຂອງປະມວນກົດໝາຍແພ່ງ; ມາດຕາ 16 ວັກ 4 ຂອງກົດໝາຍວ່າດ້ວຍ ການຈົດທະບຽນຄອບຄົວ ປີ 2018.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 155 ການແຕ່ງດອງ ລະຫວ່າງ ຄົນຕ່າງປະເທດ, ຄົນຕ່າງດ້າວ ແລະ ຄົນບໍ່ມີສັນຊາດດ້ວຍກັນ ຢູ່ ສປປ ລາວ

ການແຕ່ງດອງ ລະຫວ່າງ ຄົນຕ່າງປະເທດ, ຄົນຕ່າງດ້າວ ແລະ ຄົນບໍ່ມີສັນຊາດດ້ວຍກັນ ຢູ່ ສປປ ລາວ ໃຫ້ປະຕິບັດຕາມກົດໝາຍຂອງ ສປປ ລາວ ຫຼື ກົດໝາຍຂອງປະເທດຂອງຄູ່ແຕ່ງດອງ ຝ່າຍໃດໜຶ່ງກໍໄດ້.

ຖ້າຫາກປະຕິບັດຕາມກົດໝາຍຂອງປະເທດຂອງຄູ່ແຕ່ງດອງຝ່າຍໃດໜຶ່ງນັ້ນ ໃຫ້ຈົດທະບຽນແຕ່ງດອງຢູ່ສະຖານທູດ ຫຼື ສະຖານກົງສຸນຂອງປະເທດທີ່ກ່ຽວຂ້ອງ.

ສຳລັບການຈົດທະບຽນການແຕ່ງດອງ ລະຫວ່າງ ຄົນຕ່າງປະເທດ, ຄົນຕ່າງດ້າວ ຫຼື ຄົນບໍ່ມີສັນຊາດດ້ວຍກັນ ຢູ່ ສປປ ລາວ ໃຫ້ດຳເນີນຢູ່ ພະແນກພາຍໃນຂັ້ນແຂວງ ບ່ອນຄູ່ບ່າວສາວອາໄສຢູ່ ຫຼື ບ່ອນຢູ່ຂອງຝ່າຍໃດໜຶ່ງ ຫຼື ດຳເນີນຢູ່ສະຖານທູດ ຫຼື ສະຖານກົງສຸນຂອງປະເທດທີ່ກ່ຽວຂ້ອງປະຈຳ ສປປ ລາວ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍທະບຽນຄອບຄົວ.

ຈຸດປະສົງ	ເພື່ອກຳນົດ ເງື່ອນໄຂ, ຂັ້ນຕອນ ແລະ ວິທີການ ການແຕ່ງດອງ ຂອງຄົນຕ່າງປະເທດ, ຄົນຕ່າງດ້າວ ຫຼື ຄົນບໍ່ມີສັນຊາດ ດ້ວຍກັນ ຢູ່ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.
ຕົວຢ່າງ	1. **ກ** ເປັນຄົນຕ່າງປະເທດ ໄດ້ມາເຮັດວຽກ ຢູ່ ສປປ ລາວ ໄດ້ມັກຮັກກັບ **ຂ** ເປັນຄົນບໍ່ມີສັນຊາດ ທັງສອງໄດ້ໄປຈົດທະບຽນແຕ່ງດອງນຳກັນຢູ່ພະແນກພາຍໃນຂອງແຂວງ ບ່ອນພວກກ່ຽວເຮັດວຽກຮ່ວມກັນ, ຊຶ່ງ **ກ** ແລະ **ຂ** ທີ່ເປັນຄູ່ ບ່າວ-ສາວ ໄດ້ເລືອກນຳໃຊ້ກົດໝາຍ ສປປ ລາວ, ເພື່ອຈົດທະບຽນແຕ່ງດອງ. ເມື່ອໄດ້ຮັບທະບຽນແຕ່ງດອງ ພວກເຂົາກໍເປັນຄູ່ຜົວ-ເມຍ ຢ່າງຖືກຕ້ອງຕາມກົດໝາຍ. 2. **ກ** ເປັນຄົນຕ່າງປະເທດ ໄດ້ມາເຮັດວຽກ ຢູ່ ສປປ ລາວ ໄດ້ມັກຮັກກັບ **ຂ** ເປັນຄົນບໍ່ມີສັນຊາດ ທັງສອງໄດ້ເລືອກໃຊ້ການຈົດທະບຽນແຕ່ງດອງຕາມກົດໝາຍປະເທດຂອງ **ກ**. ພວກກ່ຽວ ໄດ້ໄປຈົດທະບຽນການແຕ່ງດອງ ນຳສະຖານທູດ ຫຼື ກົງສຸນຂອງປະເທດຂອງ **ກ** ທີ່ຢູ່ ສ ປປ ລາວ ຕາມທີ່ໄດ້ກຳນົດໄວ້ ໃນກົດໝາຍວ່າດ້ວຍທະບຽນຄອບຄົວ.
ເຫດຜົນໃນການປັບປຸງ	ມາດຕານີ້ ປັບປຸງມາຈາກມາດຕາ 47 ຂອງກົດໝາຍວ່າດ້ວຍຄອບຄົວ ປີ 2008 ໄດ້ແຍກການແຕ່ງດອງ ລະຫວ່າງຄົນຕ່າງປະເທດ, ຄົນຕ່າງດ້າວ ແລະ ຄົນບໍ່ມີສັນຊາດ ຢູ່ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກຈາກການແຕ່ງດອງ ລະຫວ່າງ ພົນລະເມືອງລາວ ກັບຄົນຕ່າງປະເທດ, ຄົນຕ່າງດ້າວ ແລະ ຄົນບໍ່ມີສັນຊາດດ້ວຍກັນ ຢູ່ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນມາດຕາຕ່າງຫາກ, ສຳລັບລະບຽບຫຼັກການ, ນະ�โยบาย ແມ່ນບໍ່ໄດ້ມີການປັບປຸງ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ບັນຫາໃດ ທີ່ພົວພັນ ກັບຄົນຕ່າງປະເທດ ບັນຫາດັ່ງກ່າວນັ້ນ ໃນຫຼາຍໆປະເທດ ແມ່ນກຳນົດໄວ້ໃນ private international law ເຊັ່ນ: ການແຕ່ງດອງ, ການຢ່າຮ້າງ, ການສືບທອດມູນມໍຣະດົກ, ແລະ ການເຮັດສັນຍາ.
ມາດຕາອ້າງອີງ	ມາດຕາ 16 ວັກ 5 ຂອງກົດໝາຍວ່າດ້ວຍການຈົດທະບຽນຄອບຄົວ ປີ 2018
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 156 ການແຕ່ງດອງ ລະຫວ່າງ ພົນລະເມືອງລາວ ດ້ວຍກັນ ຢູ່ຕ່າງປະເທດ

ລັດ ຮັບຮູ້ການແຕ່ງດອງ ລະຫວ່າງ ພົນລະເມືອງລາວດ້ວຍກັນ ຢູ່ຕ່າງປະເທດ ທີ່ເຮັດຂຶ້ນໂດຍສອດຄ່ອງກັບກົດໝາຍຂອງ ສປປ ລາວ.

ສຳລັບການຈົດທະບຽນການແຕ່ງດອງ ລະຫວ່າງ ພົນລະເມືອງລາວດ້ວຍກັນ ຢູ່ຕ່າງປະເທດ ໃຫ້ດຳເນີນຢູ່ໜ່ວຍງານທະບຽນຄອບຄົວສຳນັກງານຜູ້ຕາງໜ້າ ຂອງ ສປປ ລາວ ຢູ່ຕ່າງປະເທດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍທະບຽນຄອບຄົວ.

ຈຸດປະສົງ	ເພື່ອກຳນົດເງື່ອນໄຂ, ການຈົດທະບຽນ, ພິທີແຕ່ງງານ ແລະ ວິທີການກ່ອນການແຕ່ງດອງ ລະຫວ່າງ ພົນລະເມືອງລາວດ້ວຍກັນ ຢູ່ຕ່າງປະເທດ.
ຕົວຢ່າງ	**ກ** ແລະ **ຂ** ເປັນຄົນລາວ ໄປເຮັດວຽກຢູ່ປະເທດ **ຄ** ກໍລະນີນີ້ **ກ** ແລະ **ຂ** ກໍສາມາດໄປຈົດທະບຽນແຕ່ງດອງນຳກັນ ຢູ່ກົງສຸນລາວປະຈຳປະເທດ **ຄ**, ຖືວ່າ **ກ** ແລະ **ຂ** ໄດ້ຈົດທະບຽນການແຕ່ງດອງຖືກຕ້ອງ ຕາມກົດໝາຍຄອບຄົວຂອງ ສ ປປ ລາວ.

ເຫດຜົນໃນການປັບປຸງ	ມາດຕານີ້ ໄດ້ປັບປຸງມາຈາກມາດຕາ 49 ຂອງກົດໝາຍວ່າດ້ວຍຄອບຄົວ ປີ 2008 ໄດ້ປັບປຸງໃຫ້ສອດຄອງ ກັບມາດຕາ 152 ກ່ຽວກັບການຈົດທະບຽນ ຂອງອົງການທີ່ມີສິດອຳນາດໃນການຈົດທະບຽນ ແລະ ໃຫ້ສອດຄ່ອງ ກັບກົດໝາຍວ່າດ້ວຍການຈົດທະບຽນຄອບຄົວ ປີ 2018.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 16 ວັກ 3 ຂອງກົດໝາຍວ່າດ້ວຍ ການຈົດທະບຽນຄອບຄົວ ປີ 2018; ມາດຕາ 150-152 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 157 ການແຕ່ງດອງ ລະຫວ່າງ ພົນລະເມືອງລາວ ກັບ ຄົນຕ່າງປະເທດ, ຄົນຕ່າງດ້າວ, ຄົນບໍ່ມີສັນຊາດ ຢູ່ຕ່າງປະເທດ

ລັດຮັບຮູ້ການແຕ່ງດອງລະຫວ່າງພົນລະເມືອງລາວກັບຄົນຕ່າງປະເທດ,ຄົນຕ່າງດ້າວ,ຄົນບໍ່ມີສັນຊາດ ຢູ່ຕ່າງປະເທດ ຕາມກົດໝາຍຂອງປະເທດທີ່ບ່າວສາວນັ້ນອາໄສຢູ່ ໂດຍສອດຄ່ອງກັບກົດໝາຍຂອງ ສປປ ລາວ ແລະ ຕ້ອງແຈ້ງໃຫ້ສະຖານທູດ ຫຼື ສະຖານກົງສຸນລາວ ປະຈຳປະເທດນັ້ນ ຮັບຮູ້ນຳ.

ສຳລັບການຈົດທະບຽນການແຕ່ງດອງ ລະຫວ່າງ ພົນລະເມືອງລາວ ກັບ ຄົນຕ່າງດ້າວ, ຄົນຕ່າງປະເທດ ຫຼື ຄົນບໍ່ມີສັນຊາດ ຢູ່ຕ່າງປະເທດ ໃຫ້ດຳເນີນຢູ່ໜ່ວຍງານທະບຽນຄອບຄົວສຳນັກງານຜູ້ຕາງໜ້າ ຂອງ ສປປ ລາວ ຢູ່ຕ່າງປະເທດ ຫຼື ປະຕິບັດຕາມກົດໝາຍຂອງປະເທດທີ່ຕົນອາໄສຢູ່ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍທະບຽນຄອບຄົວ.

ຈຸດປະສົງ	ເພື່ອກຳນົດ ຂັ້ນຕອນ ແລະ ວິທີການ ກ່ອນການແຕ່ງດອງ ລະຫວ່າງ ພົນລະເມືອງ ລາວ ກັບ ຄົນຕ່າງປະເທດ ຄົນຕ່າງດ້າວ ຫຼື ຄົນບໍ່ມີສັນຊາດ ຢູ່ຕ່າງປະເທດ.
ຕົວຢ່າງ	**ກ** ໄປເຮັດວຽກຢູ່ປະເທດ **ຄ** ແລ້ວໄດ້ພົບຮັກ ກັບ **ຂ** ຄົນປະເທດ **ຄ**, ທັງສອງ ໄດ້ຕົກລົງກັນ ຈົດທະບຽນແຕ່ງດອງນຳກັນ ຕາມປະມວນກົດໝາຍແພ່ງຂອງປະເທດ **ຄ**, ຢູ່ຫ້ອງການຈົດທະບຽນແຕ່ງດອງ ທີ່ກ່ຽວຂ້ອງຂອງເມືອງ ທີ່ພວກກ່ຽວອາໃສຢູ່, ຫຼັງຈາກໄດ້ຮັບທະບຽນແຕ່ງດອງແລ້ວ ທັງສອງ ໄດ້ນຳທະບຽນແຕ່ງດອງ ແຈ້ງໃຫ້ສະຖານທູດ ຂອງປະເທດ **ກ** ປະຈຳປະເທດ **ຄ** ເພື່ອຮັບຮູ້.
ເຫດຜົນໃນການປັບປຸງ	ມາດຕານີ້ ປັບປຸງມາຈາກ ມາດຕາ 47 ວັກ 6 ຂອງກົດໝາຍວ່າດ້ວຍຄອບຄົວ ປີ 2008 ແລະ ມາດຕາ 10 ຂອງດຳລັດ ນາຍົກລັດຖະມົນຕີ ປີ 1994.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 16 ວັກ 6 ຂອງກົດໝາຍວ່າດ້ວຍການຈົດທະບຽນຄອບຄົວ ປີ 2018.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ຄ. ການແຕ່ງດອງເປັນໂມຄະ

ມາດຕາ 158 ການແຕ່ງດອງເປັນໂມຄະ

ການແຕ່ງດອງເປັນໂມຄະ ແມ່ນ ການແຕ່ງດອງທີ່ລະເມີດ:

1. ເງື່ອນໄຂຂອງການເອົາກັນເປັນຜົວເມຍ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 150 ຂອງປະມວນກົດໝາຍສະບັບນີ້;

2. ການບໍ່ອະນຸຍາດໃຫ້ແຕ່ງດອງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 151 ຂອງປະມວນກົດໝາຍສະບັບນີ້.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ ກ່ຽວກັບ ກໍລະນີການແຕ່ງດອງທີ່ໄດ້ຈົດທະບຽນແຕ່ງດອງແລ້ວເປັນໂມຄະ.
ຕົວຢ່າງ	**1. ກ** ເປັນຄົນຕ່າງແຂວງ ທີ່ມີເມຍຢູ່ແລ້ວ ແລະ ໄດ້ມາເຮັດວຽກຢູ່ແຂວງທີ່ **ຂ** ຢູ່, ແລ້ວ **ກ** ໄດ້ມາມັກຮັກ ກັບ **ຂ** ໂດຍໃຊ້ເລ່ຫຼ່ຽມ ກົນອຸບາຍຕົວະຍົວະ **ຂ** ວ່າຕົນເອງຍັງເປັນໂສດຢູ່ ສະນັ້ນ ທັງສອງມັກຮັກກັນ ຈຶ່ງໄດ້ຕົກລົງຈົດທະບຽນແຕ່ງດອງນຳກັນຢູ່ແຂວງທີ່ **ຂ** ຢູ່, ຫຼັງຈາກຈັດພິທີແຕ່ງດອງແລ້ວ **ຄ** ຜູ້ເປັນເມຍຂອງ **ກ** ໄດ້ຮູ້ວ່າ **ກ** ໄດ້ໄປແຕ່ງດອງ ກັບ **ຂ** ຍິງຄົນໃໝ່, ສະນັ້ນ **ຄ** ຈຶ່ງໄດ້ມາທັກທ້ວງ ແລ້ວນຳທະບຽນແຕ່ງດອງສະເໜີຕໍ່ສານ ໃຫ້ສານຕັດສິນວ່າ ການແຕ່ງດອງຂອງ **ກ** ແລະ **ຂ** ເປັນໂມຄະ, ຍ້ອນບໍ່ຖືກຕ້ອງ ຕາມເງື່ອນໄຂ ຂອງການແຕ່ງດອງທີ່ກຳນົດໄວ້ ໃນມາດຕາ 150 ຂໍ້ 3. **2. ກ** ແລະ **ຂ** ເປັນຍາດໃກ້ຊິດ ທັງສອງ ໄດ້ໄປເຮັດວຽກ ຢູ່ຕ່າງແຂວງນຳກັນ ແລ້ວໄດ້ມັກຮັກກັນດັ່ງ **ກ** ແລະ **ຂ** ຈຶ່ງໄດ້ໄປຂໍຈົດທະບຽນແຕ່ງດອງນຳກັນຢູ່ແຂວງທີ່ພວກກ່ຽວໄປເຮັດວຽກນັ້ນ ໂດຍທີພະແນກພາຍໃນຂອງແຂວງນັ້ນ ກໍບໍ່ຮູ້ລະອຽດ ກ່ຽວກັບປະຫວັດຂອງ **ກ** ແລະ **ຂ** ດີ,ຕໍ່ມາ **ຄ** ຜູ້ເປັນແມ່ຂອງ **ຂ** ຈຶ່ງຮູ້ວ່າ ລູກສາວຕົນເອງໄດ້ແຕ່ງດອງ ກັບນ້າບ່າວຂອງ **ຂ** ເອງ, ດັ່ງນັ້ນ **ຄ** ຈຶ່ງໄດ້ນຳທະບຽນຄອບຄົວ ແລະ ເອກະສານຢັ້ງຢືນວ່າ **ກ** ແລະ **ຂ** ເປັນຍາດໃກ້ຊິດນັ້ນ ໄປສະເໜີຕໍ່ສານ ໃຫ້ສານຕັດສິນວ່າ ການແຕ່ງດອງ ຂອງ **ກ** ແລະ **ຂ** ເປັນໂມຄະ, ຍ້ອນບໍ່ຖືກຕ້ອງ ຕາມເງື່ອນໄຂຂອງການແຕ່ງດອງທີ່ກຳນົດໄວ້ ໃນມາດຕາ 151 ຂໍ້ 2 ຂອງປະມວນກົດໝາຍແພ່ງ.
ເຫດຜົນໃນການປັບປຸງ	ມາດຕານີ້ ໄດ້ປັບປຸງມາຈາກມາດຕາ 17 ຂອງກົດໝາຍວ່າດ້ວຍ ຄອບຄົວ ປີ 2008 ຊຶ່ງຂໍ້ 1 ຂອງມາດຕານີ້ ບໍ່ສອດຄ່ອງກັບການແຕ່ງດອງເປັນໂມຄະ ເນື່ອງຈາກ ວ່າການເປັນຜົວໜຶ່ງເມຍດຽວໃນຂໍ້ 1 ຂອງມາດຕານີ້ ແມ່ນສອດຄ່ອງກັບມາດຕາ 142 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 742 ແລະ 731 736 ຂອງປະມວນກົດໝາຍແພ່ງຍີປຸ່ນ;
ມາດຕາອ້າງອີງ	ມາດຕາ 159 -160 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 159 ການລົບລ້າງການແຕ່ງດອງເປັນໂມຄະ

ຜົວ, ເມຍ, ພໍ່ ແມ່ ຂອງຜົວ ຫຼື ເມຍ, ຫົວໜ້າອົງການໄອຍະການປະຊາຊົນ, ເຈົ້າໜ້າທີ່ທະບຽນຄອບຄົວ ຫຼື ຜູ້ມີຜົນປະ�โຫຍດກ່ຽວຂ້ອງ ມີສິດຮ້ອງຂໍໃຫ້ລົບລ້າງການແຕ່ງດອງເປັນໂມຄະ.

ການລົບລ້າງການແຕ່ງດອງເປັນໂມຄະ ແມ່ນສິດອຳນາດຂອງສານ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ວ່າ ຜູ້ທີ່ສາມາດຮ້ອງຂໍ ໃຫ້ລົບລ້າງການແຕ່ງດອງເປັນໂມຄະ ແລະ ອົງການມີສິດລົບລ້າງການແຕ່ງດອງເປັນໂມຄະ.
ຕົວຢ່າງ	ແມ່ຂອງ **ຂ** ຮູ້ວ່າລູກສາວຕົນເອງ ຈົດທະບຽນແຕ່ງດອງ ກັບ **ກ** ທີ່ເປັນລູກນ້າ. ແມ່ຈຶ່ງໄດ້ເຮັດຄຳຮ້ອງຂໍລົບລ້າງທະບຽນແຕ່ງດອງຕໍ່ສານ; ເມື່ອສານ ໄດ້ພິຈາລະນາ ຄຳຮ້ອງຂໍລົບລ້າງ ແລະ ບັນດາຫຼັກຖານຕ່າງໆແລ້ວ, ການຈົດທະບຽນ ແຕ່ງດອງເປັນການລະເມີດ ມາດຕາ 151 ຂໍ້ 2 ຂອງປະມວນກົດໝາຍແພ່ງ ຊຶ່ງ **ກ** ແລະ **ຂ** ເປັນຍາດໃກ້ຊິດກັນ ກົດໝາຍບໍ່ອະນຸຍາດ ໃຫ້ແຕ່ງດອງກັນ, ການແຕ່ງດອງຂອງ **ກ** ແລະ **ຂ** ເປັນໂມຄະ, ສານຈຶ່ງໄດ້ລົບລ້າງການແຕ່ງດອງ ດັ່ງກ່າວ.
ເຫດຜົນໃນການປັບປຸງ	ມາດຕານີ້ ໄດ້ປັບປຸງມາຈາກມາດຕາ 18 ຂອງກົດໝາຍວ່າດ້ວຍຄອບຄົວ ປີ 2008 ຊຶ່ງໄດ້ກຳນົດເປັນສອງວັກ ໂດຍ ວັກໜຶ່ງ ແມ່ນຜູ້ຮ້ອງຂໍລົບລ້າງ ແລະ ວັກສອງ ແມ່ນ ອົງການທີ່ມີສິດລົບລ້າງການແຕ່ງດອງເປັນໂມຄະ ແລະ ໃຫ້ບູລິມະສິດ ບຸກຄົນກ່ອນການຈັດຕັ້ງ ໃນການຮ້ອງຂໍລົບລ້າງ.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງ ຂອງປະເທດອື່ນ	ມາດຕາ 731- 738 ແລະ 742 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ; ມາດຕາ 2 ຂໍ້ 1 ຂອງກົດໝາຍ ກ່ຽວກັບຂັ້ນຕອນ ການດຳເນີນຄະດີສ່ວນບຸກຄົນ ຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 151 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 160 ຜົນສະທ້ອນຂອງການແຕ່ງດອງເປັນໂມຄະ

ເມື່ອສານ ຫາກໄດ້ຕັດສິນລົບລ້າງການແຕ່ງດອງເປັນໂມຄະແລ້ວ ສາຍ ພົວ ເມຍ ກໍຈະສິ້ນສຸດລົງ ແຕ່ລູກທີ່ມີຢູ່ໃນທ້ອງ ຫຼື ເກີດໃນເວລາເປັນພົວເມຍກັນນັ້ນ ກໍໃຫ້ຖືວ່າເປັນລູກທີ່ຖືກຕ້ອງຕາມກົດໝາຍ.

ຊັບສົມບັດທີ່ໄດ້ມາໃນເວລາພົວເມຍຢູ່ຮ່ວມກັນ ກ່ອນການລົບລ້າງການແຕ່ງດອງເປັນໂມຄະນັ້ນ ເປັນກຳມະສິດຮ່ວມ ແລະ ໃຫ້ແບ່ງປັນຕາມທີ່ໄດ້ກຳນົດໄວ້ໃນມາດຕາ 290 ຂອງປະມວນກົດໝາຍສະບັບນີ້.

ຈຸດປະສົງ	ເພື່ອໃຫ້ຮູ້ກ່ຽວກັບ ການສິ້ນສຸດ ຂອງການແຕ່ງດອງເປັນໂມຄະ ພ້ອມທັງຊີ້ ໃຫ້ເຫັນສາຍພົວພັນ ພໍ່ແມ່ ຕໍ່ກັບລູກທີ່ຢູ່ໃນທ້ອງ ແລະ ລູກທີ່ເກີດແລ້ວ ໃນເວລາທີ່ເປັນພົວເມຍກັນ ແລະ ຍັງກຳນົດໃຫ້ເຫັນສາຍພົວພັນຊັບສົມບັດໃນ ເວລາພົວເມຍຢູ່ຮ່ວມກັນ.
ຕົວຢ່າງ	**ກ** ໄດ້ຈົດທະບຽນແຕ່ງດອງ ກັບ **ຂ** ຊຶ່ງພວກກ່ຽວ ໄດ້ດຳລົງຊີວິດຮ່ວມກັນ ຫຼາຍປີ, ມີລູກຮ່ວມກັນ 2 ຄົນ ແລະ ມີຊັບສົມບັດຮ່ວມກັນ ຄື: ທີ່ດິນປຸກສ້າງ 1 ຕອນ, ລົດກະບະ 1 ຄັນ ແລະ ເຮືອນ 1 ຫຼັງ ພວກກ່ຽວ ໄດ້ຖືກສານຕັດສິນວ່າ: ການແຕ່ງງານເປັນໂມຄະ ດັ່ງນັ້ນ ສາຍພົວເມຍລະຫວ່າງ **ກ** ແລະ **ຂ** ກໍສິ້ນສຸດ ແຕ່ລູກທັງ 2 ຄົນ ຍັງຮັບຮູ້ເປັນລູກຂອງພວກກ່ຽວ ສ່ວນຊັບສົມບັດໃຫ້ເປັນ ຊັບສົມບັດຮ່ວມລະຫວ່າງ **ກ** ແລະ **ຂ** ຖ້າຫາກ ຕ້ອງການແບ່ງ ກໍແບ່ງຕາມ ມາດຕາ 290 ປະມວນກົດໝາຍແພ່ງ.
ເຫດຜົນໃນການປັບປຸງ	ມາດຕານີ້ ໄດ້ປັບປຸງມາຈາກ ມາດຕາ 19 ກົດໝາຍວ່າດ້ວຍຄອບຄົວ ປີ 2008, ວັກໜຶ່ງ ໄດ້ລົບລ້າງ ກ່ຽວກັບສາຍພົວເມຍ ແລະ ໃນວັກສອງແມ່ນໄດ້ລົບລ້າງ ການນຳໃຊ້ກົດໝາຍວ່າດ້ວຍຄອບຄົວ ແລະ ກົດໝາຍວ່າດ້ວຍກຳມະສິດໃນ ການແກ້ໄຂຊັບສົມບັດຮ່ວມ ໂດຍນຳໃຊ້ມາດຕາ 290 ຂອງປະມວນກົດໝາຍ ແພ່ງ.

ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ໃນປະມວນກົດໝາຍແພ່ງຂອງປະເທດລາວ ສຳລັບສາເຫດ ທີ່ພາໃຫ້ການແຕ່ງດອງເປັນໂມຄະ ຈະມີ ① ຄູ່ບ່າວສາວທັງສອງຫຼືຝ່າຍໃດຝ່າຍໜຶ່ງຍັງບໍ່ຮອດອາຍຸ 18 ປີ, ② ບໍ່ໄດ້ຕົກລົງແຕ່ງດອງກັນ, ③ ແຕ່ງດອງຊ້ອນກັນ (ມາດຕາ150), ④ ລະເມີດຂໍ້ຫ້າມ ທີ່ແຕ່ງດອງ ກັບຍາດໃກ້ຊິດ (ມາດຕາ151). ແຕ່ໃນປະມວນກົດໝາຍແພ່ງຂອງຕ່າງປະເທດ ການແຕ່ງດອງ ທີ່ເປັນໂມຄະ (ໂມຄະເດັດຂາດ) ແມ່ນ (1) ② ບໍ່ໄດ້ຕົກລົງແຕ່ງດອງກັນ ແລະ ການແຕ່ງດອງທີ່ເປັນໂມຄະ (ໂມຄະບໍ່ເດັດຂາດ) ແມ່ນ⑤ ບໍ່ໄດ້ຈົດທະບຽນການແຕ່ງດອງ, ສ່ວນ (2) ① · ③ · ④ ຈະຖືກແຍກເປັນສາເຫດຂອງການລົບລ້າງການແຕ່ງດອງ (ໂມຄະບໍ່ເດັດຂາດ) ເຊິ່ງກໍມີກໍລະນີຕົວຢ່າງ (ເຊັ່ນ: ປະມວນກົດໝາຍແພ່ງຍີ່ປຸ່ນ ມາດຕາ 742, 743 ຫາ 747). ເຊິ່ງຫຼັກການໃນການແຍກ ອັນໃດເປັນອັນໃດແມ່ນປະຕິບັດດັ່ງນີ້: ຖ້າເປັນກໍລະນີ (1) ເນື່ອງຈາກວ່າ ການແຕ່ງດອງນັ້ນບໍ່ສາມາດເຮັດໄດ້ ຕັ້ງແຕ່ທຳອິດແລ້ວ, ສະນັ້ນ ລູກທີ່ເກີດມານັ້ນ ຈະບໍ່ຖືວ່າເປັນລູກທີ່ຖືກຕ້ອງຕາມກົດໝາຍ. ຖ້າເປັນກໍລະນີ (2) ເນື່ອງຈາກວ່າ ການແຕ່ງດອງຍັງມີຜົນຈົນກ່ວາຈະຖືກລົບລ້າງ, ສະນັ້ນ ລູກທີ່ເກີດມາ ກ່ອນການລົບລ້າງການແຕ່ງດອງ ຈຶ່ງຖືວ່າເປັນລູກທີ່ຖືກຕ້ອງຕາມກົດໝາຍ.
ມາດຕາອ້າງອີງ	ມາດຕາ 158 ແລະ 159 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ: ກໍລະນີມີລູກຮ່ວມກັນ ຈະບໍ່ນຳໃຊ້ ການແບ່ງປັນຊັບສົມບັດ ຕາມມາດຕາ 181 ບໍ? ຫຼືວ່າ ຈະໃຊ້ມາດຕາ 217 ພັນທະ ການເບິ່ງແຍງລ້ຽງດູລູກ ເນື່ອງຈາກເຂົ້າໃຈວ່າ ລູກ ບໍ່ຢູ່ໃນເງື່ອນໄຂ ຂອງການແບ່ງປັນຊັບສົມບັດບໍ?

ໝວດທີ 4
ສາຍພົວພັນລະຫວ່າງຜົວເມຍ

ມາດຕາ 161 ສິດຂອງຜົວເມຍ

ຢູ່ໃນຄອບຄົວ ຜົວ ແລະ ເມຍ ມີສິດສະເໝີພາບກັນໃນທຸກດ້ານ. ຜົວ ເມຍ ພ້ອມກັນຕົກລົງບັນຫາພາຍໃນຄອບຄົວຢ່າງເປັນເອກະພາບ.

ຜົວ ເມຍ ມີສິດຕາງໜ້າ ຊຶ່ງກັນ ແລະ ກັນ ຕາມທີ່ກຳນົດໄວ້ໃນກົດໝາຍ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນ ກ່ຽວກັບຜົວເມຍ ຝ່າຍໃດຝ່າຍໜຶ່ງ ມີສິດເຊິ່ງກັນ ແລະ ກັນ ຕໍ່ກັບຝ່າຍກົງກັນຂ້າມ.
ຕົວຢ່າງ	1. **ກ** ແລະ **ຂ** ເປັນຜົວເມຍ, ຝ່າຍໃດໜຶ່ງ ບໍ່ມີສິດນຳໃຊ້ເງິນ, ວັດຖຸສິ່ງຂອງທີ່ຝ່າຍໃດໜຶ່ງຫາມາໄວ້ໃນຄອບຄົວ ແຕ່ພຽງຜູ້ດຽວ ຕ້ອງໄດ້ເຫັນດີ ເຫັນພ້ອມກັນ ກໍລະນີດັ່ງກ່າວນີ້ ຖ້າຫາກບໍ່ໄດ້ປຶກສາກັນ ຫຼື ຝ່າຍໃດໜຶ່ງ ຫາກນຳໃຊ້ໃນຄອບ ຄົວຜູ້ດຽວ ແລ້ວພາໃຫ້ມີຄວາມເສຍຫາຍ ຕໍ່ຜົວ ຫຼື ເມຍ ອີກຝ່າຍໜຶ່ງແລ້ວ ຕ້ອງໄດ້ຮັບຜິດຊອບ ແລະ ຝ່າຍທີ່ອັບປະໂຫຍດນັ້ນ ຍັງມີສິດຮ້ອງຟ້ອງໄດ້. 2. **ກ** ແລະ **ຂ** ເປັນຜົວເມຍ ໃນລະໄລຍະນີ້ ເກີດມີຄວາມຫຍຸ້ງຍາກທາງດ້ານການເງິນ ເພື່ອມາປິ່ນປົວສຸຂະພາບຂອງລູກ ທີ່ນອນຢູ່ໂຮງໝໍ. ດັ່ງນັ້ນ **ກ** ແລະ **ຂ** ຈຶ່ງໄດ້ຕົກລົງກັນຕັດສິນໃຈ ຂາຍລົດກະບະທີ່ເປັນຊັບເດີມຂອງຜົວ ເພື່ອມາເປັນຄ່າໃຊ້ຈ່າຍການປິ່ນປົວລູກ.

ເຫດຜົນໃນການປັບປຸງ	ມາດຕານີ້ ໄດ້ປັບປຸງ ມາຈາກມາດ 13 ຂອງກົດໝາຍວ່າດ້ວຍຄອບຄົວ ປີ 2008 ຊຶ່ງໄດ້ແຍກ ອອກເປັນສອງມາດຕາ ໃນປະມວນກົດໝາຍແພ່ງ ມາດຕາ 161 ສິດ ຂອງຜົວເມຍ ແລະ ມາດຕາ 164 ພັນທະ ຂອງຜົວເມຍ ແລະ ໄດ້ເພີ່ມວັກສອງ ຂອງມາດຕານີ້ເຂົ້າໃໝ່.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 761 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 31, 32, 34, 42 ແລະ 164 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນຫຼື ປະເພນີສານ	ກ່ຽວກັບການຕາງໜ້າລະຫວ່າງ ຜົວ ຫຼື ເມຍ ຈະໄດ້ຄົ້ນຄວ້າເພີ່ມເຕີມ ວ່າຕ້ອງ ວາງຂອບເຂດຈຳກັດການຕາງໜ້າດີ ຫຼື ບໍ? ເຫດຜົນທີ່ບໍສາມາດກຳນົດໄດ້ ຕ້ອງ ໄດ້ສຶກສາສະພາບຕົວຈິງ ຂອງສັງຄົມກ່ອນ.

ມາດຕາ 162 ສິດໃນການເຄື່ອນໄຫວຂອງຜົວເມຍ

ຜົວເມຍ ມີສິດເຄື່ອນໄຫວທາງດ້ານການເມືອງ, ເສດຖະກິດ, ວັດທະນະທຳ ແລະ ສັງຄົມ. ການເລືອກບ່ອນຢູ່ຂອງຄອບຄົວ ຕ້ອງມີການຕົກລົງເປັນເອກະພາບຂອງຄູ່ຜົວເມຍ.

ຈຸດປະສົງ	ເພື່ອກຳນົດສິດ ໃຫ້ຜົວເມຍເຄື່ອນໄຫວທາງດ້ານການເມືອງ, ເສດຖະກິດ ແລະ ສັງຄົມ ສ່ວນການເລືອກບ່ອນຢູ່ຂອງຄອບຄົວຕ້ອງມີຄວາມເປັນເອກະພາບກັນ.
ຕົວຢ່າງ	**ກ** ແລະ **ຂ** ເປັນຜົວເມຍກັນ, **ກ** ຜູ້ເປັນຜົວ ໄດ້ເປັນສະມາຊິກສະພາຂັ້ນແຂວງ, **ຂ** ຜູ້ເປັນເມຍກໍໄດ້ເປັນຄະນະບໍລິຫານງານຊາວໝຸນແຂວງ ດັ່ງນັ້ນ **ກ** ແລະ **ຂ** ຈຶ່ງໄດ້ມີການຕົກລົງ ພາຍໃນຄອບຄົວວ່າ ໃຫ້ຕ່າງຝ່າຍຕ່າງເຄື່ອນໄຫວວຽກງານ ໃນໜ້າທີ່ຂອງຕົນໃຫ້ດີທີສຸດ, ສ່ວນຄອບຄົວ ແມ່ນທັງສອງກໍມີໜ້າທີ່ດູແລ ຄອບຄົວຄືກັນ.
ເຫດຜົນໃນການຮັກສາເດີມ	ມາດຕານີ້ ຮັກສາເນື້ອໃນເດີມ ຂອງມາດຕາ 14 ຂອງກົດໝາຍວ່າດ້ວຍຄອບຄົວ ປີ 2008 ຊຶ່ງເຫັນວ່າ ຍັງແທດເໝາະກັບສະພາບສັງຄົມປັດຈຸບັນ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 13-16 ຂອງກົດໝາຍວ່າດ້ວຍການພັດທະນາ ແລະ ການປົກປ້ອງ ແມ່ຍິງ ປີ 2004.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 163 ສິດໃນການເລືອກນາມສະກຸນ

ຜົວ ເມຍ ມີສິດເລືອກເອົານາມສະກຸນຂອງ ຜົວ ຫຼື ເມຍ ເພື່ອເປັນນາມສະກຸນຂອງຄອບຄົວ. ຜົວ ເມຍ ຈະຮັກສານາມສະກຸນເດີມຂອງໃຜລາວໄວ້ ກໍໄດ້.

ຈຸດປະສົງ	ເພື່ອກຳນົດສິດ ຂອງຜົວ ຫຼື ເມຍ ມີສິດໃນການເລືອກໃຊ້ ນາມສະກຸນເດີມ ຂອງຕົນ ຫຼື ຂອງຜົວ ໂດຍຄວາມພໍໃຈຂອງຕົນ (ການເລືອກໃຊ້ນາມສະກຸນ ແມ່ນສິດສ່ວນຕົວ ຂອງຜົວເມຍ ຫຼື ຈະໃຊ້ຮ່ວມກັນ)
ຕົວຢ່າງ	**ກ** ແລະ **ຂ** ເປັນຜົວເມຍກັນ ມີສິດໃນການເລືອກເອົານາມສະກຸນເດີມ ຂອງ ໃຜລາວ ຕາມຄວາມພໍໃຈຂອງຕົນ ໂດຍບໍໄດ້ມີການບັງຄັບ ຈາກຜົວ ຫຼື ເມຍ ຫຼື ບຸກຄົນອື່ນວ່າຜູ້ເປັນເມຍ ຕ້ອງມາໃສ່ນາມສະກຸນຂອງຜົວ ຫຼື ບັງຄັບໃຫ້ຜູ້ເປັນ ຜົວ ຕ້ອງມາໃສ່ນາມສະກຸນຂອງເມຍ.

ເຫດຜົນໃນການຮັກສາເດີມ	ມາດຕານີ້ ຮັກສາເນື້ອໃນເດີມມາດຕາ 15 ຂອງກົດໝາຍວ່າດ້ວຍຄອບຄົວ ປີ 2008.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 750 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 17 ວັກ 4 ຂອງກົດໝາຍວ່າດ້ວຍການພັດທະນາ ແລະ ການປົກປ້ອງແມ່ຍິງ 2004
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 164 ພັນທະຂອງຜົວເມຍ

ຜົວ ເມຍ ມີພັນທະຮັກແພງ, ເຄົາລົບນັບຖື, ເບິ່ງແຍງ, ໃຫ້ກຽດ, ຮູ້ຈັກໃຫ້ອະໄພ ແລະ ຊ່ວຍເຫຼືອຊຶ່ງກັນ ແລະ ກັນ ພ້ອມກັນລ້ຽງດູລູກ, ສຶກສາອົບຮົມລູກ ແລະ ກໍ່ສ້າງກັນໃຫ້ກາຍເປັນຄອບຄົວວັດທະນະທຳທີ່ມີຄວາມສາມັກຄີ, ມີຄວາມສຸກ ແລະ ກ້າວໜ້າ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນພັນທະ ທີ່ຕ້ອງປະຕິບັດຕໍ່ກັນຂອງ ຜົວ ເມຍ ໃນສາຍພົວພັນຄອບຄົວ.
ຕົວຢ່າງ	**ກ** ແລະ **ຂ** ມີລູກສອງຄົນ, **ຂ** ເປັນແມ່ເຮືອນ ແລະ **ກ** ເປັນພະນັກງານບໍລິສັດ, **ກ** ອ້າງວ່າ ໄດ້ມີການແບ່ງໜ້າທີ່ກັນໃນຄອບຄົວ ຄື: **ຂ** ຜູ້ເປັນເມຍມີໜ້າທີ່ໃນການເບິ່ງແຍງທຸກຢ່າງໃນຄອບຄົວ ລວມທັງການເບິ່ງແຍງດູແລລູກ, ສ່ວນ **ກ** ຜູ້ເປັນຜົວມີໜ້າທີ່ ອອກແຮງງານຫາລາຍໄດ້ເພື່ອມາເບິ່ງແຍງຄອບຄົວ; **ກ** ຈະອ້າງວ່າ ໄດ້ມີການຕົກລົງກັນ ລະຫວ່າງ ຜົວເມຍ ວ່າ ເມຍ ໜ້າທີ່ສຶກສາອົບຮົມລູກ ສ່ວນ **ກ** ບໍ່ມີໜ້າທີ່ນີ້ ສະນັ້ນ **ກ** ສາມາດໄປກິນດື່ມ ຫຼື ມີກິດຈະການຕ່າງໆກັບເພື່ອນຂອງຕົນ ເວລາໃດກໍໄດ້ ແລະ **ຂ** ກໍຕ້ອງສຶກສາອົບຮົມ ແລະ ລ້ຽງລູກທັງສອງນັ້ນ ເປັນຄົນດີ ໂດຍບໍ່ໃຫ້ມີຄວາມບົກຜ່ອງ ສ່ວນ **ກ** ກໍຈະບໍ່ໃຫ້ມີຄວາມບົກຜ່ອງໃນເລື່ອງການຫາລາຍໄດ້. ການກ່າວອ້າງຂອງ **ກ** ເຖິງວ່າມີເຫດຜົນ ແຕ່ກໍບໍ່ສອດຄ່ອງກັບ ມາດຕາ 164 ເພາະມັນເປັນໜ້າທີ່ ແລະ ຄວາມຮັບຜິດຊອບຂອງ ຜົວ ເມຍ.
ເຫດຜົນໃນການປັບປຸງ	ມາດຕານີ້ ໄດ້ປັບປຸງມາຈາກມາດຕາ 13 ຂອງກົດໝາຍວ່າດ້ວຍຄອບຄົວ ປີ 2008 ຊຶ່ງໄດ້ແຍກອອກ ເປັນມາດຕາໜຶ່ງສະເພາະ ກ່ຽວກັບສິດຂອງ ຜົວ ເມຍ ຊຶ່ງກຳນົດໄວ້ ໃນມາດຕາ 161 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 19 ຂອງກົດໝາຍແຕ່ງດອງ ແລະ ຄອບຄົວ ຫວຽດນາມ 2014.
ມາດຕາອ້າງອີງ	ມາດຕາ 35 ແລະ 37 ຂອງ ລັດຖະທຳມະນູນ 2015; ມາດຕາ 161, 179, 215, 216, 217 ແລະ 220 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນຫຼືປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 165 ຄວາມຮັບຜິດຊອບຂອງ ຜົວ ເມຍ ຕໍ່ໜີ້ສິນ

ຜົວ ເມຍ ຫຼື ຝ່າຍໃດໜຶ່ງ ຕ້ອງຮັບຜິດຊອບຕໍ່ໜີ້ສິນ ໃນກໍລະນີ ດັ່ງນີ້:

1. ຜົວ ແລະ ເມຍ ໄດ້ພ້ອມກັນສ້າງໜີ້ສິນ;
2. ຜົວ ຫຼື ເມຍ ໄດ້ສ້າງໜີ້ສິນແຕ່ຝ່າຍດຽວ ເພື່ອນຳມາໃຊ້ຈ່າຍໃນຄອບຄົວ;
3. ຜົວ ຫຼື ເມຍ ໄດ້ສ້າງໜີ້ສິນແຕ່ຝ່າຍດຽວ ເພື່ອຜົນປະໂຫຍດສ່ວນຕົວຂອງຜູ້ກ່ຽວ. ໃນກໍລະນີນີ້ຖ້າວ່າ ຜົວ ຫຼື ເມຍ ຫາກໄດ້ເອົາເງິນຂອງຕົນ ຫຼື ສິນສົມສ້າງ ໃຊ້ແທນໜີ້ສິນນັ້ນ ກໍມີສິດໄດ້ຮັບການທົດແທນຄືນ ຕາມກົດໝາຍ.

ສຳລັບ ໜີ້ສິນທີ່ສ້າງຂຶ້ນພາຍຫຼັງທີ່ ຜົວ ເມຍ ໄດ້ແຍກກັນຢູ່ ເພື່ອຜົນປະໂຫຍດຂອງຄອບຄົວ ຫຼື ໂດຍມີການຕົກລົງເຫັນດີນຳກັນນັ້ນ ຜົວ ເມຍ ຕ້ອງຮັບຜິດຊອບຮ່ວມກັນ. ຖ້າຫາກໜີ້ສິນທີ່ສ້າງຂຶ້ນ ເພື່ອຜົນປະໂຫຍດສ່ວນຕົວ ໂດຍບໍ່ມີການຕົກລົງເຫັນດີນຳກັນ ໃຫ້ຜົວ ຫຼື ເມຍທີ່ໄດ້ສ້າງໜີ້ນັ້ນ ຮັບຜິດຊອບເອົາເອງ.

ຈຸດປະສົງ	ເພື່ອກຳນົດຂອບເຂດຄວາມຮັບຜິດຊອບ ຂອງຜົວເມຍ ຕໍ່ກັບໜີ້ສິນໃນແຕ່ລະ ກໍລະນີ ທີ່ຍັງເປັນຜົວເມຍກັນ.
ຕົວຢ່າງ	**<u>ກໍລະນີ ຂອງວັກ1:</u>** 1. **ກ** ແລະ **ຂ** ເປັນຜົວເມຍກັນ, ທັງສອງໄດ້ພ້ອມກັນກູ້ຢືມເງິນ ຫຼື ຊັບນຳ **ຄ** ເພື່ອມາໃຊ້ຈ່າຍໃນຄອບຄົວ ກໍລະນີນີ້ **ກ** ແລະ **ຂ** ມີຄວາມຮັບຜິດຊອບ ຮ່ວມກັນ ໃນການໃຊ້ແທນໜີ້ສິນນັ້ນ. 2. **ກ** ແລະ **ຂ** ເປັນຜົວເມຍກັນ, **ກ** ຜູ້ເປັນຜົວໄດ້ໄປກູ້ຢືມເງິນນຳ **ຄ** ເພື່ອ ມາໃຊ້ຈ່າຍ ເປັນການສ່ວນຕົວຂອງ **ກ** ເອງ, ເມື່ອຮອດ ກຳນົດເວລາສົ່ງຄືນ **ກ** ບໍ່ມີຄວາມສາມາດໃຊ້ແທນຄືນໃຫ້ **ຄ**, ດັ່ງນັ້ນ **ກ** ຈຶ່ງມາເອົາເງິນຂອງ ຄອບຄົວທີ່ເປັນສິນສົມສ້າງໄປໃຊ້ແທນໜີ້ສິນໃຫ້ **ຄ** ກໍລະນີນີ້ **ຂ** ຜູ້ເປັນ ເມຍ ມີສິດທວງໃຫ້ **ກ** ຕ້ອງໄດ້ທົດແທນຄືນ ໃຫ້ຄອບຄົວ ຕາມກົດໝາຍ; 3. **ກ** ແລະ **ຂ** ເປັນຜົວເມຍກັນ, **ກ** ໄດ້ກູ້ຢືມເງິນ ແລະ ສ້າງໜີ້ສິນ, ເພື່ອ ຜົນປະໂຫຍດຂອງຕົນແຕ່ຝ່າຍດຽວ, **ກ** ຕ້ອງໃຊ້ແທນໜີ້ສິນດ້ວຍເງິນ ຫຼື ນຳໃຊ້ສິນສົມສ້າງ ທີ່ເປັນພູດຂອງຕົນເທົ່ານັ້ນໃຊ້ແທນໜີ້ສິນ. ຖ້າ **ກ** ໃຊ້ໜີ້ ຄືນດ້ວຍເງິນ ຫຼື ຊັບສິນທີ່ໄດ້ມາໃນເວລາແຕ່ງງານ, **ຂ** ມີສິດໄດ້ຮັບການ ທົດແທນຄືນຈາກ **ກ.** **<u>ກໍລະນີຂອງ ວັກ 2:</u>** **ກ** ແລະ **ຂ** ເປັນຜົວເມຍກັນ ໄດ້ແຍກກັນຢູ່ ແຕ່ຝ່າຍໃດຝ່າຍໜຶ່ງ ໄປກູ້ຢືມເງິນ ຫຼື ຊັບນຳ **ຄ** ເພື່ອມາໃຊ້ຈ່າຍ ໃຫ້ລູກເປັນທຶນການສຶກສາທັງ ສອງມີຄວາມຮັບຜິດຊອບຮ່ວມກັນ ໃນການໃຊ້ແທນໜີ້ສິນ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 57 ຂອງກົດໝາຍວ່າຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ປີ 2008 ໄດ້ປ່ຽນປະໂຫຍກສຸດທ້າຍ ໃນເວລາແບ່ງປັນສິນສົມ ສ້າງ ມາເປັນຕາມກົດໝາຍ ແລະ ມາດຕາ 26 ວັກ 4 ຂອງກົດໝາຍວ່າດ້ວຍ ຄອບຄົວ ປີ 2008.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງ ຂອງປະເທດອື່ນ	ມາດຕາ 761 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ; ມາດຕາ 27 ຂອງກົດໝາຍແຕ່ງດອງ ແລະ ຄອບຄົວ ຫວຽດນາມ 2014.
ມາດຕາອ້າງອີງ	ມາດຕາ 161 ວັກ 2 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນຫຼືປະເພນີສານ	ສືບຕໍ່ຄົ້ນຄວ້າ.

ໝວດທີ 5
ຊັບສິນບັດຂອງ ຜົວ ເມຍ

ມາດຕາ 166 ຊັບສິນບັດຂອງ ຜົວ ເມຍ

ຊັບສິນບັດຂອງ ຜົວ ເມຍ ປະກອບມີ ຊັບເດີມ ແລະ ສິນສົມສ້າງ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ ກ່ຽວກັບອົງປະກອບ ໂຄງສ້າງຊັບສົມບັດຂອງ ຜົວ ເມຍ.
ຕົວຢ່າງ	ກະລຸນາເບິ່ງຕົວຢ່າງ ມາດຕາ 167 ແລະ 168 ຂອງບົດອະທິບາຍປະມວນກົດໝາຍແພ່ງ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງໃໝ່ຍ້ອນວ່າ ມາດຕາ 26 ຂອງກົດໝາຍວ່າດ້ວຍກຳມະສິດ ປີ 1990 ແລະ ມາດຕາ 26 -28 ຂອງກົດໝາຍວ່າດ້ວຍຄອບຄົວ ປີ 2008 ຊຶ່ງບໍ່ໄດ້ກຳນົດ ນິຍາມລວມ ຂອງຊັບສົມບັດຂອງ ຜົວ ເມຍ, ສະນັ້ນ ຈຶ່ງກຳນົດ ໃຫ້ມີຄວາມຊັດເຈນຂຶ້ນຕື່ມ ກ່ຽວກັບຄວາມໝາຍຂອງຊັບສົມບັດ ຂອງຜົວ ເມຍ ທີ່ປະກອບດ້ວຍຊັບສົມບັດສອງປະເພດ.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງ ຂອງປະເທດອື່ນ	ມາດຕາ 762 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ; ມາດຕາ 972 ແລະ 973 ຂອງປະມວນກົດໝາຍແພ່ງກຳປູເຈຍ; ມາດຕາ 1470 ຂອງປະມວນກົດໝາຍແພ່ງໄທ.
ມາດຕາອ້າງອີງ	ຂໍ້ 2 ມາດຕາ 95, 167, 168, 181, 576, 577 ແລະ 578 ຂອງປະມວນກົດ ໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 167 ຊັບເດີມ

ຊັບເດີມ ແມ່ນ ຊັບສົມບັດ ທີ່ ຜົວ ຫຼື ເມຍ ໄດ້ມາກ່ອນການແຕ່ງດອງ ຫຼື ແມ່ນຊັບສົມບັດທີ່ໄດ້ມາ ຈາກການສືບທອດມູນມໍຣະດົກ ຫຼື ຈາກການມອບ ຫຼື ການຍົກຊັບໃຫ້ ຜົວ ຫຼື ເມຍ ສະເພາະ ພາຍຫຼັງການ ແຕ່ງ ດອງທີ່ຍັງຄົງຢູ່ ຫຼື ປ່ຽນສະພາບໄປເປັນຊັບສິ່ງຂອງໃໝ່ແລ້ວ.

ນອກຈາກນີ້ ດອກເບ້ຍ, ລາຍໄດ້ ແລະ ໝາກຜົນ ທີ່ເກີດຈາກ ຊັບເດີມຂອງ ຜົວ ຫຼື ເມຍ ກໍໃຫ້ຖືເປັນຊັບເດີມຂອງຜູ້ນັ້ນ, ເວັ້ນເສຍແຕ່ ຜົວ ຫຼື ເມຍ ຫາກໄດ້ປະກອບສ່ວນເຂົ້າໃນການຜະລິດ ຫຼື ການສ້າງສາຮ່ວມກັນ, ໃນກໍລະນີນີ້ ລາຍໄດ້ ແລະ ໝາກຜົນນັ້ນ ໃຫ້ຖືເປັນສິນສົມສ້າງ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ ທີ່ມາຂອງຊັບເດີມຂອງ ຜົວ ຫຼື ເມຍ.
ຕົວຢ່າງ	**1.** ກ່ອນການແຕ່ງດອງ **ກ** ມີລົດໃຫຍ່ 1 ຄັນ ແລະ **ຂ** ມີທີ່ດິນນາ 1 ເຮັກຕາ, ໃນນີ້ ລົດໃຫຍ່ ເປັນຊັບເດີມຂອງ **ກ,** ທີ່ດິນນາ ເປັນຊັບເດີມຂອງ **ຂ.** **2.** ກ່ອນທີ່ **ກ** ຈະແຕ່ງດອງກັບ **ຂ. ກ** ມີເງິນຝາກທະນາຄານ ຈຳນວນ 200.000.000 ກີບ ຈາກນັ້ນ **ກ** ໄດ້ຮັບດອກເບ້ຍ ຈາກເງິນຝາກດັ່ງກ່າວ ຈຳນວນ 20.000.000 ກີບ, ດອກເບ້ຍດັ່ງກ່າວ ຍັງເປັນຊັບເດີມຂອງ **ກ.** **3.** ກ່ອນການແຕ່ງດອງ **ກ** ມີທີ່ດິນນາ 3 ເຮັກຕາ ພາຍຫຼັງແຕ່ງດອງກັບ **ຂ, ກ** ແລະ **ຂ** ໄດ້ຮ່ວມກັນປູກເຂົ້າໃສ່ທີ່ດິນນາຂອງ **ກ** ຜົນຜະລິດທັງໝົດ ທີ່ໄດ້ມາ ເປັນສິນສົມສ້າງຂອງ **ກ** ແລະ **ຂ.**
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 26 ຂອງກົດໝາຍວ່າດ້ວຍຄອບຄົວ ປີ 2008 ເນື່ອງຈາກວ່າ ມາດຕາດັ່ງກ່າວ ແມ່ນໄດ້ກຳນົດກ່ຽວກັບ ສິນສົມສ້າງ ແລະ ຊັບເດີມຢູ່ໃນມາດຕາດຽວກັນ ເຮັດໃຫ້ມີຄວາມເຂົ້າໃຈຍາກ, ສະນັ້ນ ຈຶ່ງໄດ້ແຍກອອກເປັນ ມາດຕາສະເພາະ ເພື່ອຄວາມສະດວກໃນການນຳໃຊ້.

ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 1471-1473 ຂອງປະມວນກົດໝາຍແພ່ງ ແລະ ພານິດ ໄທ; ມາດຕາ 762 ຂອງປະມວນກົດໝາຍຍີ່ປຸ່ນ; ມາດຕາ 972 ຂອງປະມວນກົດໝາຍແພ່ງກຳປູເຈຍ.
ມາດຕາອ້າງອີງ	ມາດຕາ 166 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 168 ສິນສົມສ້າງ

ສິນສົມສ້າງ ແມ່ນ ຊັບສົມບັດທີ່ ຜົວ ເມຍ ສ້າງສາ ແລະ ຫາມາໄດ້ໃນເວລາເປັນຜົວເມຍນຳກັນ, ເວັ້ນເສຍແຕ່ຊັບສິ່ງຂອງທີ່ເປັນເຄື່ອງໃຊ້ສ່ວນຕົວ ຊຶ່ງບໍ່ມີມູນຄ່າສູງ.

ລາຍໄດ້ທັງໝົດທີ່ ຜົວ ຫຼື ເມຍ ໄດ້ຮັບໃນເວລາຢູ່ຮ່ວມກັນ ຫຼື ແຍກກັນຢູ່ນັ້ນ ກໍໃຫ້ຖືເປັນສິນສົມສ້າງ.

ໃນກໍລະນີທີ່ມີການສ້ອມແປງຊັບເດີມຂອງຝ່າຍໃດຝ່າຍໜຶ່ງ ໂດຍນຳໃຊ້ສິນສົມສ້າງ ຫຼື ຊັບເດີມຂອງອີກຝ່າຍໜຶ່ງ ໃນມູນຄ່າເກີນກວ່າສອງສ່ວນສາມ ຂອງມູນຄ່າຊັບເດີມທີ່ສ້ອມແປງ ກໍໃຫ້ຖືວ່າຊັບນັ້ນເປັນສິນສົມສ້າງ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນ ຊັບສົມບັດຂອງ ຜົວ ເມຍ ທີ່ເປັນສິນສົມສ້າງ ແລະ ການໄດ້ມາຂອງສິນສົມສ້າງ.
ຕົວຢ່າງ	1. **ກໍລະນີຂອງວັກ 1** **ກ** ແຕ່ງດອງກັບ **ຂ** ແລະ ພ້ອມກັນຫາມາໄດ້ ມີເຮືອນໜຶ່ງຫຼັງພ້ອມດ້ວຍທີ່ດິນ, ລົດໃຫຍ່ໜຶ່ງຄັນ ແລະ ເງິນຝາກທະນາຄານ ຈຳນວນ 10.000.000 ກີບ, ໂມງ 2 ໜ່ວຍ, ເປັນສິນສົມສ້າງ ສ່ວນເຄື່ອງໃຊ້ສ່ວນຕົວ ເປັນຊັບເດີມ. 2. **ກໍລະນີຂອງວັກທີ 2** **ກ** ແຕ່ງດອງກັບ **ຂ** ໃນເວລາຕໍ່ມາ **ກ** ແລະ **ຂ** ໄດ້ແຍກກັນຢູ່ ດ້ວຍເຫດຜົນວ່າ **ກ** ແລະ **ຂ** ບໍ່ເຂົ້າໃຈກັນ ດັ່ງນັ້ນ ທັງສອງຈຶ່ງໄດ້ແຍກກັນຢູ່ຄົນລະບ່ອນ,ໃນກໍລະນີນີ້ ລາຍໄດ້ຂອງ **ກ** ແລະ **ຂ** ທີ່ໄດ້ມາ ພາຍຫຼັງທັງສອງໄດ້ແຍກກັນຢູ່ນັ້ນ ກໍໃຫ້ເປັນສິນສົມສ້າງ. 3. **ກໍລະນີຂອງວັກທີ 3** **ກ** ມີລົດໃຫຍ່ທີ່ເປັນຊັບເດີມຂອງຜູ້ກ່ຽວ ພາຍຫຼັງແຕ່ງດອງກັບ **ຂ** ແລ້ວ ໄດ້ນຳໃຊ້ລົດຄັນດັ່ງກ່າວເປັນເວລາຫຼາຍປີ, ລົດຄັນດັ່ງກ່າວ ຈຶ່ງເກີດການຊຸດໂຊມເປ່ເພ ຕີມູນຄ່າຂອງລົດຍັງເຫຼືອພຽງແຕ່ 60.000.000 ກີບ, **ກ** ແລະ **ຂ** ຈຶ່ງໄດ້ນຳເອົາເງິນເກັບທ້ອນໄວ້ ໃນລະຫວ່າງແຕ່ງດອງ ທີ່ເປັນສິນສົມສ້າງ ໄປສ້ອມແປງຄືນໃໝ່ ໃນມູນຄ່າ 50.000.000 ກີບ, ລົດຄັນດັ່ງກ່າວ ໄດ້ກາຍເປັນສິນສົມສ້າງຂອງ **ກ** ແລະ **ຂ.**
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 26 ຂອງກົດຫມາຍວ່າດ້ວຍຄອບຄົວ ປີ 2008 ເນື່ອງຈາກວ່າ ມາດຕາດັ່ງກ່າວ ແມ່ນໄດ້ກຳນົດກ່ຽວກັບ ສິນສົມສ້າງ ແລະ ຊັບເດີມ ຢູ່ໃນມາດຕາດຽວກັນ ເຮັດໃຫ້ມີຄວາມເຂົ້າໃຈຍາກ ສະນັ້ນ ຈຶ່ງໄດ້ແຍກອອກເປັນ ມາດຕາສະເພາະ ເພື່ອຄວາມສະດວກໃນການນຳໃຊ້.

ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 762 ຂອງປະມວນກົດໝາຍຍີ່ປຸ່ນ; ມາດຕາ 1474 ຂອງປະມວນກົດໝາຍແພ່ງ ແລະ ພານິດໄທ; ມາດຕາ 973 ຂອງປະມວນກົດໝາຍກຳປູເຈຍ; ມາດຕາ 33 ຂອງກົດໝາຍແຕ່ງດອງ ແລະ ຄອບຄົວ ຫວຽດນາມ 2014.
ມາດຕາອ້າງອີງ	ມາດຕາ 166, 167 ແລະ 169 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ໃນການຕີຄວາມໝາຍຂອງ ວັກ 2 ຂອງມາດຕານີ້ ກໍມີສິ່ງທີ່ຢາກໃຫ້ບັນດາທ່ານຄົ້ນ ຄວາໃນກົດຈະກຳຕໍ່ໜ້າ. ເຊິ່ງວັກ 2 ໄດ້ກຳນົດວ່າ **ລາຍໄດ້ທັງໝົດທີ່ຜົວ ຫຼື ເມຍໄດ້ຮັບໃນເວລາຢູ່ຮ່ວມກັນ ຫຼື ແຍກກັນຢູ່ນັ້ນ ກໍໃຫ້ເປັນສິນສົມສ້າງ.** ຖ້າ ຜົວ ຫຼື ເມຍ ຝ່າຍໃດຝ່າຍໜຶ່ງ ແຍກຢູ່ແຕ່ບໍ່ໄດ້ຮັບການຕົກລົງເຫັນດີ ຈາກອີກຝ່າຍ (ໜີໄປເລີຍ), ໃນກໍລະນີນີ້ ຈະຕີຄວາມໝາຍໄດ້ບໍ່ວ່າ ລາຍຮັບຂອງຝ່າຍທີ່ບໍ່ໄດ້ຕົກລົງເຫັນດີ(ຝ່າຍທີ່ຖືກໜີປະ)ກໍຈະກາຍເປັນສິນສົມສ້າງ. ຖ້າຫາກຕີຄວາມໝາຍວ່າ ເປັນສິນສົມສ້າງ.

ມາດຕາ 169 ການນຳໃຊ້ສິນສົມສ້າງ

ຜົວ ເມຍ ມີສິດເທົ່າທຽມກັນ ກ່ຽວກັບສິນສົມສ້າງ ໂດຍບໍ່ຂຶ້ນກັບວ່າຈະແມ່ນ ຜົວ ຫຼື ເມຍ ເປັນຜູ້ຫາຊັບສິ່ງຂອງນັ້ນມາໄດ້. ຜົວ ເມຍ ມີສິດນຳໃຊ້ສິນສົມສ້າງຢ່າງສົມເຫດສົມຜົນ ຕາມຄວາມຮຽກຮ້ອງຕ້ອງການຂອງຄອບຄົວ. ສຳລັບ ສິດໄດ້ຮັບໝາກຜົນ ແລະ ຊື້ຂາດ ກ່ຽວກັບສິນສົມສ້າງ ຊຶ່ງມີມູນຄ່າສູງນັ້ນ ຕ້ອງມີຄວາມເປັນເອກະພາບນຳກັນເສຍກ່ອນ ເຊັ່ນ ການຊື້ຂາຍສິດນຳໃຊ້ ທີ່ດິນ ຫຼື ເຮືອນ, ການນຳເອົາສິນສົມສ້າງໄປຄ້ຳປະກັນ.

ຈຸດປະສົງ	ເພື່ອເຮັດໃຫ້ຮູ້ກ່ຽວກັບ ກຳມະສິດໃນສິນສົມສ້າງ, ສິດນຳໃຊ້, ສິດໄດ້ຮັບໝາກຜົນ ແລະ ສິດຊື້ຂາດຂອງ ຜົວ ເມຍ ຕໍ່ກັບສິນສົມສ້າງ.
ຕົວຢ່າງ	**ກ** ເປັນພະນັກງານບໍລິສັດ ມີເງິນເດືອນ 4.000.000 ກີບ, **ຂ** ເປັນພະນັກງານອົງການຈັດຕັ້ງສາກົນ ມີເງິນເດືອນ 10.000.000 ກີບ. ທັງສອງໄດ້ແຕ່ງດອງກັນແລ້ວມີເຮືອນ 1 ຫຼັງ, ມີທີ່ດິນ 1 ຕອນ, ລົດໃຫຍ່ 1 ຄັນ, ເງິນທ້ອນ ຈຳນວນ 10.000.000 ກີບ ແລະ ເຄື່ອງຮັບໃຊ້ໃນຄອບຄົວອື່ນ ສິ່ງຂອງທັງໝົດນັ້ນແມ່ນສິນສົມສ້າງຂອງ **ກ** ແລະ **ຂ** ດັ່ງນັ້ນ ການນຳໃຊ້ສິນສົມສ້າງນັ້ນບໍ່ວ່າ **ກ** ຫຼື **ຂ** ໃຜໆກໍມີສິດນຳໃຊ້ ຫຼື ຊື້ຂາດໄດ້ຄືກັນ, ຖ້າວ່າ **ກ** ຫຼື **ຂ** ຜູ້ໃດຜູ້ໜຶ່ງຈະຊື້ຂາດ ກ່ຽວກັບສິນສົມສ້າງ ຊຶ່ງມີມູນຄ່າສູງນັ້ນ ຕ້ອງໃຫ້ມີຄວາມເປັນເອກະພາບນຳກັນເສຍກ່ອນ ເຊັ່ນວ່າ **ກ** ຫຼື **ຂ** ຜູ້ໃດຜູ້ໜຶ່ງຕ້ອງການ ທີ່ຈະຊື້ ຫຼື ຂາຍສິດນຳໃຊ້ທີ່ດິນ, ຂາຍເຮືອນ ຫຼື ການນຳເອົາສິນສົມສ້າງໄປຄ້ຳປະກັນນັ້ນ **ກ** ແລະ **ຂ** ຕ້ອງເຫັນດີນຳກັນ.
ເຫດຜົນໃນການຮັກສາເດີມ	ມາດຕານີ້ ຮັກສາເນື້ອໃນເດີມ ມາດຕາ 27 ຂອງກົດໝາຍວ່າດ້ວຍ ຄອບຄົວ ປີ 2008.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 762 ຂອງປະມວນກົດໝາຍຍີ່ປຸ່ນ; ມາດຕາ 1476 ຂອງປະມວນກົດໝາຍແພ່ງ ແລະ ພານິດໄທ.
ມາດຕາອ້າງອີງ	ມາດຕາ 168 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ໝວດທີ 6
ການສິ້ນສຸດການເປັນ ຜົວ ເມຍ

ມາດຕາ 170 ການສິ້ນສຸດການເປັນ ຜົວ ເມຍ

ການສິ້ນສຸດການເປັນ ຜົວ ເມຍ ແມ່ນການຂາດຈາກສາຍພົວພັນ ຜົວ ເມຍ ຕາມສາເຫດໃດໜຶ່ງ ດັ່ງນີ້:

1. ການຢ່າຮ້າງ;
2. ຄຳຕັດສິນຂອງສານ ທີ່ຮັບຮູ້ການແຕ່ງດອງເປັນໂມຄະ;
3. ການເສຍຊີວິດຂອງ ຜົວ ຫຼື ເມຍ.

ຈຸດປະສົງ	ເພື່ອກຳນົດໃຫ້ຮັບຮູ້ ສາເຫດການສິ້ນສຸດການເປັນ ຜົວ ເມຍ.
ຕົວຢ່າງ	1. **ກ** ກັບ **ຂ** ໄດ້ແຕ່ງດອງກັນເປັນຜົວເມຍ, ຢູ່ຕໍ່ມາໄລຍະໜຶ່ງ **ກ** ໄດ້ຂໍຢ່າຮ້າງ ກັບ **ຂ** ຕໍ່ສານປະຊາຊົນ ແລະ ສານໄດ້ພິຈາລະນາແລ້ວເຫັນວ່າ ການຮ້ອງ ຂໍຢ່າຮ້າງຂອງ **ກ** ມີເຫດຜົນພຽງພໍ ແລະ ຄົບຕາມເງື່ອນໄຂ ຂອງການຢ່າຮ້າງ, ສານຈຶ່ງລົງຄຳຕັດສິນໃຫ້ **ກ** ແລະ **ຂ** ຢ່າຮ້າງກັນ, ສະນັ້ນ, **ກ** ແລະ **ຂ** ໄດ້ໄປຈົດທະບຽນການຢ່າຮ້າງ ກໍລະນີນີ້ ສາຍພົວພັນ ຜົວ ເມຍ ຂອງ **ກ** ແລະ **ຂ** ໄດ້ສິ້ນສຸດລົງ. 2. **ກ** ເປັນຄົນຕ່າງແຂວງ ມີເມຍຢູ່ແລ້ວ ແລະ ໄດ້ມາເຮັດວຽກຢູ່ແຂວງທີ່ **ຂ** ຢູ່ນັ້ນ ແລ້ວໄດ້ມາມັກຮັກກັບ **ຂ** ໂດຍໃຊ້ເລ່ຫຼ່ຽມກົນອຸບາຍຕົວະຍົວະ **ຂ** ວ່າ ຕົນເອງຍັງເປັນໂສດຢູ່ ສະນັ້ນ ທັງສອງມັກຮັກກັນ ຈຶ່ງໄດ້ຕົກລົງຈົດທະບຽນ ແຕ່ງດອງນຳກັນ ຫຼັງຈາກຈັດພິທີແຕ່ງດອງແລ້ວ **ຄ** ທີ່ເປັນເມຍຂອງ **ກ** ໄດ້ ຮູ້ວ່າ **ກ** ໄປແຕ່ງດອງກັບ **ຂ** ສະນັ້ນ **ຄ** ຈຶ່ງໄດ້ນຳທະບຽນແຕ່ງດອງສະເໜີຕໍ່ສານ ໃຫ້ສານຕັດສິນຮັບຮູ້ວ່າ ການແຕ່ງດອງຂອງ **ກ** ແລະ **ຂ** ເປັນໂມຄະ. 3. **ກ** ກັບ **ຂ** ໄດ້ແຕ່ງດອງກັນ ເປັນຜົວເມຍຢູ່ຮ່ວມກັນມາເປັນເວລາສາມປີ **ກ** ເລີຍເກີດອຸບປະຕິເຫດເສຍຊີວິດ. ສະນັ້ນ, ສາຍພົວພັນ ຜົວ ເມຍ ຂອງ **ກ** ແລະ **ຂ** ຈຶ່ງໄດ້ສິ້ນສຸດລົງ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 16 ຂອງກົດໝາຍວ່າດ້ວຍຄອບຄົວ ປີ 2008 ໂດຍ ຍ້າຍຂໍ້ 2 ຂຶ້ນມາເປັນຂໍ້ 1 ສະຫຼັບກັນ ເພື່ອຢາກໃຫ້ເຫັນວ່າ ການຢ່າຮ້າງ ເປັນສາເຫດທີ່ເກີດຂຶ້ນຫຼາຍ ໃນເວລາ ຜົວ ເມຍ ຍັງມີຊີວິດຢູ່ ແລະ ການຢ່າຮ້າງ ກໍພາໃຫ້ມີການສິ້ນສຸດ ສິດ ແລະ ພັນທະ ທີ່ມີຕໍ່ກັນໃນຖານະເປັນ ຜົວ ເມຍ ແລະ ທັງສອງກໍຈະມີສິດ ແລະ ພັນທະໃໝ່ທີ່ເກີດຂຶ້ນກັບບຸກຄົນອື່ນ. ນອກຈາກ ນັ້ນ ຍັງໄດ້ເອົາຂໍ້ 3 ແລະ ຂໍ້ 5 ອອກ ຍ້ອນຂໍ້ຄວາມໃນຂໍ້ 3 ສັງລວມແລ້ວກໍແມ່ນ ອັນດຽວ ກັບການຢ່າຮ້າງ ແລະ ຂໍ້ 5 ສັງລວມແລ້ວ ກໍແມ່ນການເສຍຊີວິດ ຂອງ ຜົວ ຫຼື ເມຍ ຕາມມາດຕາ 97 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງ ຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 100 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ກ. ການຢ່າຮ້າງ

ມາດຕາ 171 ການຢ່າຮ້າງ

ການຢ່າຮ້າງແມ່ນການສິ້ນສຸດການເປັນຜົວເມຍຍ້ອນສາເຫດໃດໜຶ່ງຕາມທີ່ໄດ້ກຳນົດໄວ້ໃນມາດຕາ 176 ຂອງປະມວນກົດໝາຍແພ່ງ.

ບໍ່ວ່າໃນກໍລະນີໃດກໍຕາມ ບໍ່ອະນຸຍາດໃຫ້ມີການຊື້ຮ້າງ ຫຼື ບັງຄັບໃຫ້ຢ່າຮ້າງ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ ຄວາມໝາຍການຢ່າຮ້າງ ຕາມຄຳຕັດສິນຂອງສານ ຈະເຮັດໃຫ້ສາຍພົວພັນ ຜົວ ເມຍ ສິ້ນສຸດລົງ ແລະ ບໍ່ອະນຸຍາດ ໃຫ້ມີການບັງຄັບໃຫ້ຢ່າຮ້າງ ຫຼື ຊື້ຮ້າງ.
ຕົວຢ່າງ	1. **ກໍລະນີຊື້ຮ້າງ:** **ກ** ເປັນນັກທຸລະກິດ ທີ່ຫາເງິນໄດ້ຈຳນວນຫຼວງຫຼາຍ **ກ** ຕ້ອງການຢ່າຮ້າງ ກັບ **ຂ** ໂດຍທີ່ **ຂ** ບໍ່ຢາກຢ່າຮ້າງ ສະນັ້ນ **ກ** ຈຶ່ງສະເໜີເອົາເງິນໃຫ້ **ຂ** ຈຳນວນ 100.000.000 ກີບ ເພື່ອໃຫ້ **ຂ** ຢ່າຮ້າງກັບຕົນ. ສະນັ້ນ ກໍລະນີຊື້ຮ້າງຈຶ່ງບໍ່ສາມາດເຮັດໄດ້. ແຕ່ຖ້າຫາກ **ຂ** ເຫັນດີກັບການຢ່າງຮ້າງ, ການຢ່າຮ້າງນັ້ນກໍ ຖືກຕ້ອງຕາມກົດໝາຍ. 2. **ກໍລະນີບັງຄັບໃຫ້ຢ່າຮ້າງ:** **ກ** ເປັນນັກທຸລະກິດ ທີ່ຫາເງິນໄດ້ຈຳນວນຫຼວງຫຼາຍ **ກ** ຕ້ອງການຢ່າຮ້າງ ກັບ **ຂ** ໂດຍທີ່ **ຂ** ບໍ່ຢາກຢ່າຮ້າງ ສະນັ້ນ **ກ** ຈຶ່ງບັງຄັບໃຫ້ **ຂ** ຕ້ອງມາເຊັນໃບຢ່າຮ້າງ ດ້ວຍການນາບຂູ່ເພື່ອໃຫ້ **ຂ** ຢ່າຮ້າງກັບຕົນ. ການກະທຳຂອງ **ກ** ບັງຄັບໃຫ້ **ຂ** ຢ່າຮ້າງແມ່ນບໍ່ສາມາດເຮັດໄດ້.
ເຫດຜົນໃນການສ້າງໃໝ່	ມາດຕານີ້ ວັກ 1 ສ້າງຂຶ້ນໃໝ່ ໂດຍການກຳນົດນິຍາມ ຂອງການຢ່າຮ້າງ ແລະ ວັກ 2 ແມ່ນເອົາມາຈາກ ວັກ 2 ຂອງມາດຕາ 21 ຂອງກົດໝາຍວ່າດ້ວຍຄອບຄົວ ປີ 2008, ການເພີ່ມເຕີມເຂົ້າໃໝ່ກ່ຽວກັບ ບັງຄັບໃຫ້ຢ່າຮ້າງ ຍ້ອນເຫດຜົນວ່າ ການຢ່າຮ້າງ ໃນສະພາບການປະຈຸບັນ ມັນມີຫຼາຍກໍລະນີທີ່ເປັນເຫດການຕົວຈິງ ມັນເກີດຂຶ້ນໃນສັງຄົມ ເລື່ອງການຢ່າຮ້າງ ຊຶ່ງກົດໝາຍວ່າດ້ວຍຄອບຄົວ ບໍ່ໄດ້ ກຳນົດລະອຽດ.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງ ຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 150 ວັກ 1 ຂໍ້ 2 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 172 ປະເພດການຢ່າຮ້າງ

ການຢ່າຮ້າງ ມີ ສອງ ປະເພດ ດັ່ງນີ້:

1. ການຢ່າຮ້າງດ້ວຍຄວາມສະໝັກໃຈ;
2. ການຢ່າຮ້າງຕາມການຕັດສິນຂອງສານ.

ຈຸດປະສົງ	ກຳນົດເພື່ອໃຫ້ຮູ້ວ່າ ການຢ່າຮ້າງມີ 2 ປະເພດຄື : ການຢ່າຮ້າງດ້ວຍຄວາມສະ ໝັກໃຈ ແລະ ການຢ່າຮ້າງຕາມຄຳຕັດສິນຂອງສານ.

ຕົວຢ່າງ	1. **ກ** ແລະ **ຂ** ເຫັນວ່າ ພວກຕົນບໍ່ສາມາດຢູ່ຮ່ວມກັນ ເປັນຜົວ ເປັນເມຍ ໄດ້ແລ້ວ ຍ້ອນວ່າທັງສອງໝົດຮັກກັນ ແລະ ບໍ່ຢາກໃຊ້ຊີວິດຢູ່ຮ່ວມກັນ ເປັນຜົວ ເມຍ ຈຶ່ງຕົກລົງບໍ່ໃຊ້ຊີວິດຮ່ວມກັນ ເປັນຜົວ ເມຍ ກັນອີກຕໍ່ໄປ, ການຕົກລົງນີ້ທັງສອງຄົນ ຜົວ ເມຍ ໄດ້ພິຈາລະນາຮອບຄອບ ແລະ ຕັ້ງໃຈ ປະຮ້າງກັນຕາມຄວາມຕ້ອງການຂອງ **ກ** ແລະ **ຂ** ກໍລະນີນີ້ແມ່ນການຢ່າ ຮ້າງດ້ວຍຄວາມສະໝັກໃຈ. 2. **ກ** (ເມຍ) ຕ້ອງການຢ່າຮ້າງກັບ **ຂ** (ຜົວ) ໂດຍເຫດຜົນ ແລະ ເງື່ອນໄຂທີ່ວ່າ **ຂ** (ຜົວ) ຕິດເຫຼົ້າ ແລະ ການພະນັນຕີໄກ່ ນອກຈາກບໍ່ຊ່ວຍເຫຼືອເມຍ ເບິ່ງແຍງລ້ຽງດູລູກ ຂອງພວກກ່ຽວ **2** ຄົນແລ້ວ **ຂ** (ຜົວ) ຍັງທຸບຕີເມຍ ເພື່ອໃຫ້ເມຍເອົາເງິນໄປຊື້ເຫຼົ້າ ແລະ ຫຼົ້ນການພະນັນ, ແຕ່ **ຂ** (ຜົວ) ບໍ່ຍອມຢ່າຮ້າງ ເນື່ອງມາຈາກວ່າຍັງຮັກ **ກ** (ເມຍ) ຢູ່; ໃນກໍລະນີນີ້ **ກ** ສາມາດຮ້ອງຂໍຕໍ່ສານ ເພື່ອພິຈາລະນາການຢ່າຮ້າງ. 3. ເບິ່ງໃນຕົວຢ່າງ ມາດຕາ 173 ແລະ 175 ຂອງບົດອະທິບາຍປະມວນກົດໝາຍແພ່ງ.
ເຫດຜົນໃນການຮັກສາເດີມ	ມາດຕານີ້ ຮັກສາເນື້ອໃນເດີມ ຂອງວັກ 1 ຂອງ ມາດຕາ 21 ກົດໝາຍວ່າດ້ວຍ ຄອບຄົວ ປີ 2008 ສ່ວນວັກສອງຂອງມາດຕາ 21 ກົດໝາຍວ່າດ້ວຍຄອບຄົວ ທີ່ກຳນົດວ່າ ບໍ່ວ່າໃນກໍລະນີໃດ ບໍ່ອະນຸຍາດ ໃຫ້ມີການຊື້ຮ້າງ ໄດ້ຍ້າຍໄປລວມ ໄວ້ໃນວັກ 2 ມາດຕາ 171 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງ ຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 170, 171, 173, 175, 183, 185, 186 ແລະ 187 ຂອງປະມວນ ກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 173 ການຢ່າຮ້າງດ້ວຍຄວາມສະໝັກໃຈ

ການຢ່າຮ້າງດ້ວຍຄວາມສະໝັກໃຈ ແມ່ນ ການຢ່າຮ້າງດ້ວຍຄວາມເຫັນດີເຫັນພ້ອມຂອງ ຜົວ ເມຍ. ການຢ່າຮ້າງດ້ວຍຄວາມສະໝັກໃຈ ຕ້ອງມີເງື່ອນໄຂຄົບຖ້ວນ ດັ່ງນີ້:

1. ບໍ່ມີຂໍ້ຂັດແຍ່ງກ່ຽວກັບບັນຫາລູກ ເຊັ່ນ ການລ້ຽງດູລູກ;
2. ບໍ່ມີຂໍ້ຂັດແຍ່ງກ່ຽວກັບສິນສົມສ້າງ;
3. ບໍ່ມີຂໍ້ຂັດແຍ່ງກ່ຽວກັບໜີ້ສິນ.

ການຢ່າຮ້າງດ້ວຍຄວາມສະໝັກໃຈ ຈະມີຜົນສັກສິດ ຕ້ອງໄດ້ນຳໄປຈົດທະບຽນຢູ່ຫ້ອງການພາຍໃນ ຂັ້ນເມືອງ ບ່ອນຄູ່ ຜົວ ເມຍ ອາໄສຢູ່ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍທະບຽນຄອບຄົວ.

ຈຸດປະສົງ	ກຳນົດເພື່ອໃຫ້ຮູ້ກ່ຽວກັບ ເງື່ອນໄຂອງການຢ່າຮ້າງ ດ້ວຍຄວາມສະໝັກໃຈ, ພ້ອມ ທັງໃຫ້ຮູ້ວ່າ ເພື່ອເຮັດໃຫ້ການຢ່າຮ້າງມີຜົນສັກສິດ ຈຳເປັນຕ້ອງໄດ້ຈົດທະບຽນ
ຕົວຢ່າງ	1. **ກ** ກັບ **ຂ** ຕ້ອງການຢ່າຮ້າງກັນ ໂດຍຕົກລົງກັນໄດ້ວ່າໃຫ້ **ກ** ເປັນຜູ້ລ້ຽງດູລູກ. ຄູ່ຜົວເມຍບໍ່ມີໜີ້ສິນ ແລະ ສິນສົມສ້າງກໍແບ່ງປັນກັນເອງໄດ້ ແຕ່ເພື່ອຢາກໃຫ້ສາຍ ຜົວ ເມຍ ຂາດກັນ ຄູ່ຜົວເມຍ ຕ້ອງເຮັດຄຳຮ້ອງຂໍ ຢ່າຮ້າງຫານາຍບ້ານ ໂດຍດຳເນີນຕາມການກຳນົດຂອງມາດຕາ 173 ຂອງປະມວນກົດໝາຍແພ່ງ. ຫຼັງຈາກມີການຈົດທະບຽນການຢ່າຮ້າງແລ້ວ ສິດ ແລະ ພັນທະ ໃນການ ເປັນ ຜົວ ເມຍ ຂອງ **ກ** ແລະ **ຂ** ກໍຈະໝົດໄປ. 2. ເບິ່ງຕາມຕົວຢ່າງ 1 ມາດຕາ 172 ຂອງບົດອະທິບາຍປະມວນກົດໝາຍແພ່ງ.

ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 21/1 ກົດໝາຍວ່າດ້ວຍຄອບຄົວ ປີ 2008 ຕື່ມວັກສຸດທ້າຍ ໃສ່ເພື່ອໃຫ້ຮູ້ຜົນສັກສິດ ຂອງການຢ່າຮ້າງ ດ້ວຍຄວາມສະໝັກໃຈ ຕ້ອງໄດ້ໄປຈົດທະບຽນ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 174 ຂອງກົດໝາຍແຕ່ງດອງ ແລະ ຄອບຄົວ ຫວຽດນາມ 2014 ມາດຕາ 763 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 174 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ກົດໝາຍວ່າດ້ວຍຄອບຄົວ ປີ 1990 ບໍ່ໄດ້ກຳນົດ ການຢ່າຮ້າງ ດ້ວຍຄວາມສະໝັກໃຈ. ກົດໝາຍວ່າດ້ວຍຄອບຄົວ ປີ 2008 ໄດ້ກຳນົດ ການຢ່າຮ້າງ ດ້ວຍຄວາມສະໝັກໃຈເປັນຄັ້ງທຳອິດ.

ມາດຕາ 174 ຂັ້ນຕອນການຢ່າຮ້າງດ້ວຍຄວາມສະໝັກໃຈ

ຜົວ ເມຍ ທີ່ມີຈຸດປະສົງຢ່າຮ້າງກັນດ້ວຍຄວາມສະໝັກໃຈ ຕ້ອງເຮັດຄຳຮ້ອງຂໍຢ່າຮ້າງ ໂດຍຊ້ອງໜ້າ ພໍ່ແມ່, ເຖົ້າແກ່ທັງສອງຝ່າຍ ພ້ອມດ້ວຍພະຍານ ຢ່າງໜ້ອຍສາມຄົນ ແລ້ວຍື່ນຕໍ່ນາຍບ້ານ ບ່ອນພວກຕົນອາໄສຢູ່. ເມື່ອໄດ້ຮັບຄຳຮ້ອງຂໍຢ່າງຮ້າງນັ້ນແລ້ວ ນາຍບ້ານຕ້ອງສຶກສາອົບຮົມໃຫ້ຜົວເມຍຄືນດີກັນ, ຖ້າວ່າພວກກ່ຽວຫາກບໍ່ສົມຍອມຄືນດີກັນໃນທັນໃດ ກໍຕ້ອງໃຫ້ເວລາໄປຄົ້ນຄິດພາຍໃນກຳນົດເວລາສາມເດືອນ.

ພາຍຫຼັງທີ່ຜົວເມຍ ໄດ້ຄົ້ນຄິດແລະບໍ່ຕົກລົງຄືນດີກັນແລ້ວ ນາຍບ້ານຕ້ອງເຮັດບົດບັນທຶກການຢ່າຮ້າງ ແລ້ວສົ່ງໃຫ້ເຈົ້າໜ້າທີ່ທະບຽນຄອບຄົວ ເມືອງ, ເທດສະບານ, ນະຄອນ ເພື່ອຈົດທະບຽນການຢ່າຮ້າງ ແລ້ວ ອອກໃບຢ່າຮ້າງໃຫ້ຄູ່ ຜົວ ເມຍ ຜູ້ລະສະບັບ ເພື່ອເປັນຫຼັກຖານ.

ຈຸດປະສົງ	ເພື່ອກຳນົດຂັ້ນຕອນ ແລະ ເວລາ ໃນການຢ່າຮ້າງດ້ວຍຄວາມສະໝັກໃຈ.
ຕົວຢ່າງ	**ກ** ແລະ **ຂ** ໄດ້ຕົກລົງຢ່າຮ້າງດ້ວຍຄວາມສະໝັກໃຈ, ໃນການຂໍຢ່າຮ້າງ ນັ້ນທັງສອງຕ້ອງໄດ້ເຮັດຄຳຮ້ອງຂໍຢ່າຮ້າງ ໂດຍມີພໍ່ແມ່, ເຖົ້າແກ່, ພະຍານເຂົ້າຮ່ວມຊ້ອງໜ້າ ແລະ ຕ້ອງຍື່ນຄຳຮ້ອງຂໍດັ່ງກ່າວ ໃຫ້ແກ່ນາຍບ້ານ ບ່ອນທີ່ພວກກ່ຽວອາໄສຢູ່. ເມື່ອໄດ້ຮັບຄຳຮ້ອງຂໍແລ້ວ ນາຍບ້ານກໍຈະສຶກສາອົບຮົມໃຫ້ ຜົວ ເມຍ ຄືນດີກັນ ແລະ ໃຫ້ເວລາ 3 ເດືອນ ແກ່ພວກກ່ຽວໃນການຄົ້ນຄິດ. ເມື່ອຜ່ານໄປ 3 ເດືອນ ຫາກຜົວເມຍບໍ່ສາມາດຄືນດີກັນໄດ້, ນາຍບ້ານ ກໍຕ້ອງເຮັດບົດບັນທຶກການຢ່າຮ້າງ ແລ້ວສົ່ງໃຫ້ເຈົ້າໜ້າທີ່ທະບຽນຄອບຄົວ.
ເຫດຜົນໃນການປັບປຸງ	ມາດຕານີ້ ປັບປຸງມາຈາກ ມາດຕາ 21/2 ຂອງກົດໝາຍຄອບຄົວ ປີ 2008 ກັບ ມາດຕາ 21/2 ມີຄວາມແຕກຕ່າງກັນຢູ່ບ່ອນວ່າ ຫົວຂໍ້ໄດ້ເວົ້າເຖິງອົງການພິຈາລະນາການຢ່າຮ້າງດ້ວຍຄວາມສະໝັກໃຈ ແຕ່ມາດຕານີ້ເວົ້າເຖິງຂັ້ນຕອນການຢ່າຮ້າງ ດ້ວຍຄວາມສະໝັກໃຈ ໂດຍເນື້ອໃນບໍ່ໄດ້ອ້າງເຖິງມາດຕາ 173 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 76 ຂອງກົດໝາຍທະບຽນຄອບຄົວ ຍີ່ປຸ່ນ
ມາດຕາອ້າງອີງ	ມາດຕາ 173 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 175 ການຢ່າຮ້າງຕາມການຕັດສິນຂອງສານ

ການຢ່າຮ້າງຕາມການຕັດສິນຂອງສານ ແມ່ນ ການພິຈາລະນາຕັດສິນຂອງສານ ໃຫ້ຢ່າຮ້າງຕາມການ ຮ້ອງຟ້ອງ ຫຼື ຮ້ອງຂໍ ຂອງ ຜົວ ຫຼື ເມຍ.

ການຢ່າຮ້າງຕາມການຕັດສິນຂອງສານ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ມີການຮ້ອງຟ້ອງ ຫຼື ຮ້ອງຂໍຢ່າຮ້າງຂອງ ຜົວ ຫຼື ເມຍ;
2. ມີສາເຫດຂອງການຢ່າຮ້າງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 176 ຂອງປະມວນກົດໝາຍສະບັບນີ້;
3. ມີຂໍ້ຂັດແຍ່ງ ກ່ຽວກັບ ການລ້ຽງດູລູກ, ສິນສົມສ້າງ, ໜີ້ສິນ ແລະ ບັນຫາອື່ນ ຂອງຄູ່ ຜົວ ເມຍ.

ການຢ່າຮ້າງຕາມການຕັດສິນຂອງສານ ມີຜົນນັບແຕ່ວັນທີຄຳຕັດສິນຂອງສານໃຊ້ໄດ້ຢ່າງເດັດຂາດ ເປັນຕົ້ນໄປ.

ຈຸດປະສົງ	ການກຳນົດໃຫ້ຮູ້ ກ່ຽວກັບການຢ່າຮ້າງ ຕາມການຕັດສິນຂອງສານແມ່ນຫຍັງ, ການດຳເນີນ ແລະ ເງື່ອນໄຂທີ່ເຮັດໃຫ້ການຢ່າຮ້າງ ຕາມການຕັດສິນຂອງສານ ສາມາດຈັດຕັ້ງປະຕິບັດໄດ້ ແລະ ວັນທີ່ມີຜົນຂອງການຢ່າຮ້າງເກີດຂຶ້ນແມ່ນວັນໃດ.
ຕົວຢ່າງ	1. **ກ** ແລະ **ຂ** ເປັນຜົວເມຍກັນມາເປັນເວລາ 5 ປີ, **ຂ** ຜູ້ເປັນເມຍ ບໍ່ພໍໃຈຕໍ່ພຶດຕິກຳທີ່ບໍ່ດີ ຂອງ **ກ, ຂ** ຈຶ່ງໄດ້ຍື່ນຄຳຮ້ອງຂໍຢ່າຮ້າງຕໍ່ສານ. 2. **ຂ** ຜູ້ເປັນເມຍ ໄດ້ໄປຍື່ນຄຳຮ້ອງຟ້ອງເພື່ອຂໍຢ່າຮ້າງກັບ **ກ** ຜູ້ເປັນຜົວ ຍ້ອນວ່າ **ກ** ບໍ່ຊ່ວຍເຫຼືອເມຍ ເບິ່ງແຍງລ້ຽງດູລູກຂອງພວກກ່ຽວ **2** ຄົນ, ໃນແຕ່ລະມື້ **ກ** ມີແຕ່ປ້ອຍດ່າ, ທຸບຕີ, ຕີດເຫຼົ້າ, ແຕ່ **ກ** ຜູ້ເປັນຜົວ ບໍ່ຍອມປ່ຽນແປງ **ຂ** ຈຶ່ງຮ້ອງຂໍຢ່າຮ້າງຕໍ່ສານ ເພື່ອພິຈາລະນາຕັດສິນໃຫ້ມີການຢ່າຮ້າງ ລະຫວ່າງ **ກ** ກັບ **ຂ.** 3. **ກ** ແລະ **ຂ** ຜິດຖຽງກັນ ຍ້ອນ **ກ** ບໍ່ເອົາເງິນມາລ້ຽງດູລູກຊ່ວຍ, ລັກຂາຍທີ່ດິນສິນສົມສ້າງ, ໄປກູ້ຢືມເງິນ ນຳ **ຄ** ແລ້ວ ເອົາໄປໃຊ້ຜູ້ດຽວ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 21/3 ວັກ 1 ຂອງກົດໝາຍວ່າດ້ວຍຄອບຄົວ ປີ 2008 ເພື່ອກຳນົດໃຫ້ເຫັນກ່ຽວກັບການຢ່າຮ້າງຕາມຄຳຕັດສິນຂອງສານ. ຄຳວ່າ **"ບັນຫາອື່ນ"** ທີ່ກຳນົດໃນຂໍ້ 3 ວັກ 2 ມາດຕານີ້ ໝາຍເຖິງ ບັນຫາຕ່າງໆ ທີ່ຜົວເມຍ ບໍ່ສາມາດຕົກລົງກັນໄດ້ ເຊັ່ນ ການປ່ຽນແປງຊັບເດີມ, ຄ່າດອງຄ້າງ, ຄ່າລ້ຽງດູຜົວ ຫຼື ເມຍ. ໃນມາດຕາ 16 ຂໍ້ 3 ກົດໝາຍວ່າດ້ວຍ ຄອບຄົວ ປີ 2008 ເງື່ອນໄຂທີ່ຈະເຮັດໃຫ້ການຢ່າຮ້າງມີຜົນ ແມ່ນຄຳຕັດສິນ ແລະ ການຈົດທະບຽນການຢ່າຮ້າງ. ແຕ່ໃນມາດຕານີ້, ການຢ່າຮ້າງຕາມການຕັດສິນຂອງສານ ມີຜົນນັບແຕ່ຄຳຕັດສິນຂອງສານໃຊ້ໄດ້ຢ່າງເດັດຂາດເປັນຕົ້ນໄປ ຊຶ່ງການຈົດທະບຽນບໍ່ໄດ້ຖືວ່າເປັນເງື່ອນໄຂ. ໃນນີ້ລວມທັງກໍລະນີທີ່ ບໍ່ມີການສະເໜີສານພິຈາລະນາຢ່າຮ້າງຕັດຂາດຈາກສາຍພົວພັນ ຜົວ ເມຍ ແຕ່ມີການສະເໜີພິຈາລະນາບັນຫາອື່ນເຊັ່ນ: ການແບ່ງປັນ ສິນສົມສ້າງ, ຄ່າລ້ຽງດູ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 51 ຂອງກົດໝາຍຄອບຄົວ ຫວຽດນາມ; ມາດຕາ 982 ຂອງປະມວນກົດໝາຍແພ່ງ ກຳປູເຈຍ; ມາດຕາ 770, 768 ແລະ 766 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 170,171,172 ແລະ 177 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 176 ສາເຫດຂອງການຢ່າຮ້າງ

ຜົວ ຫຼື ເມຍ ຈະຂໍຢ່າຮ້າງກັນໄດ້ ເມື່ອມີສາເຫດໃດໜຶ່ງ ດັ່ງນີ້:

1. ທຳມິດສະຈານ;
2. ໃຊ້ຄວາມຮຸນແຮງ ຫຼື ປ້ອຍດ່າດ້ວຍຄວາມຫຍາບຊ້າຕໍ່ກັນ ຫຼື ຕໍ່ ພໍ່ ແມ່ ແລະ ຍາດພີ່ນ້ອງ ຫຼື

ມີການປະພຶດທີ່ບໍ່ເໝາະສົມຢ່າງຮ້າຍແຮງ ເຊັ່ນ ຕິດເຄື່ອງດື່ມທີ່ມີທາດເຫຼົ້າ, ຕິດຢາເສບຕິດຢ່າງໜັກໜ່ວງ ຫຼື ຫຼິ້ນການພະນັນເປັນອາຈິນ, ຫຼິ້ນກີນຝຸ່ມເຟືອຍ;

3. ໜີໄປ ແລະ ບໍ່ໄດ້ສົ່ງ ຂ່າວຄາວ ຫຼື ຊັບມາລ້ຽງຄອບຄົວ ເປັນເວລາ ສາມປີ ຂຶ້ນໄປ;

4. ໄປບວດເປັນ ພິກຂຸ, ສາມະເນນ ຫຼື ພໍ່ຂາວ ຫຼື ແມ່ຂາວ ເກີນກວ່າສາມປີ ໂດຍບໍ່ມີຄວາມເຫັນດີນຳກັນ;

5. ເປັນຜູ້ຫາຍສາບສູນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 95 ຂອງປະມວນກົດໝາຍສະບັບນີ້;

6. ຖືກສານຕັດສິນລົງໂທດ ຕັດອິດສະລະພາບ ແຕ່ ຫ້າປີຂຶ້ນໄປ;

7. ເປັນພະຍາດ ຊຶ່ງເປັນອັນຕະລາຍຮ້າຍແຮງຈົນບໍ່ສາມາດຈະຢູ່ນຳກັນໄດ້;

8. ເປັນບ້າເສຍຈິດ ຈົນບໍ່ສາມາດຈະຢູ່ນຳກັນໄດ້;

9. ບໍ່ສາມາດຮ່ວມປະເວນີກັນໄດ້;

10. ບໍ່ສາມາດດຳລົງຊີວິດເປັນ ຜົວ ເມຍ ກັນຕໍ່ໄປໄດ້ ຍ້ອນສາເຫດຕ່າງໆ ເຊັ່ນ ຄວາມບໍ່ສັດຊື່ຕໍ່ກັນ, ການທໍລະມານຈິດໃຈກັນ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນກ່ຽວກັບເຫດຜົນ ທີ່ມາໃນການຮ້ອງຂໍຢ່າຮ້າງ (ສາເຫດຂອງການຢ່າຮ້າງ)
ຕົວຢ່າງ	**ອີງຕາມສາເຫດຂອງການຢ່າຮ້າງແຕ່ຂໍ້ 1-10 ກ ຫຼື ຂ ມີສິດຈະຂໍຢ່າຮ້າງໄດ້ ດັ່ງນີ້:** 1. **ກ** ແລະ **ຂ** ເປັນຜົວເມຍກັນ. ຕໍ່ມາ **ກ** ໄດ້ໄປທຳມິດສະຈານກັບ **ຄ** ດັ່ງນັ້ນ **ຂ** ຈຶ່ງມີສິດຂໍຢ່າຮ້າງ; 2. **ກ** ແລະ **ຂ** ເປັນຜົວເມຍກັນ. ພາຍຫຼັງການແຕ່ງດອງ ໄດ້ສອງປີ **ກ** ຜູ້ເປັນຜົວມີການປະພຶດທີ່ບໍ່ເໝາະສົມຢ່າງຮ້າຍແຮງ ເຊັ່ນ ຕິດຢາເສບຕິດ, ຫຼິ້ນກີນຝຸ່ມເຟືອຍ, ຫຼິ້ນການພະນັນເປັນອາຈິນ,ໃຊ້ຄວາມຮຸນແຮງ ແລະ ປ່ອຍດ່າດ້ວຍຄວາມຫຍາບຊ້າຕໍ່ **ຂ** ຫຼື ພໍ່ແມ່ ຫຼື ຍາດຕິພີ່ນ້ອງ ດັ່ງນັ້ນ **ຂ** ຜູ້ເປັນເມຍຈຶ່ງມີສິດຂໍຢ່າຮ້າງ; 3. **ກ** ແລະ **ຂ** ເປັນຜົວເມຍກັນ. ໃນເວລາຕໍ່ມາ **ກ** ໄດ້ໜີອອກຈາກບ້ານໄປຢູ່ຕ່າງແຂວງ ຫຼື ຕ່າງປະເທດເປັນເວລາ 5 ປີ ແລະ ກໍບໍ່ໄດ້ສົ່ງຂ່າວຄາວໃດໆ ພ້ອມທັງບໍ່ໄດ້ສົ່ງຊັບມາລ້ຽງຄອບຄົວ, ດັ່ງນັ້ນ **ຂ** ຜູ້ເປັນເມຍຈຶ່ງມີສິດຂໍຢ່າຮ້າງ; 4. **ກ** ແລະ **ຂ** ເປັນຜົວເມຍກັນ. ຢູ່ຕໍ່ມາຮອດປີທີ 6 **ຂ** ຜູ້ເປັນເມຍໄດ້ໜີໄປບວດເປັນແມ່ຂາວເປັນເວລາ 5 ປີ ໂດຍບໍ່ໄດ້ຮັບການເຫັນດີ ຈາກ **ກ** ດັ່ງນັ້ນ **ກ** ຜູ້ເປັນຜົວຈຶ່ງມີສິດຂໍຢ່າຮ້າງ; 5. **ກ** ແລະ **ຂ** ເປັນຜົວເມຍກັນ. **ກ** ຖືກສານຕັດສິນປະກາດວ່າເປັນຜູ້ຫາຍສາບສູນ ດັ່ງນັ້ນ **ຂ** ຜູ້ເປັນເມຍຈຶ່ງມີສິດຂໍຢ່າຮ້າງ; 6. **ກ** ແລະ **ຂ** ເປັນຜົວເມຍກັນ. ໃນເວລາຕໍ່ມາ **ກ** ຜູ້ເປັນຜົວໄດ້ໄປຄ້າຂາຍຢາບ້າ ແລ້ວຖືກເຈົ້າໜ້າທີ່ຈັບໄດ້ ມີຢາບ້າຢູ່ໃນຄອບຄອງຈຳນວນຫຼາຍພັນເມັດຈຶ່ງຖືກສານຕັດສິນຕັດອິດສະຫຼະພາບເປັນເວລາ 15 ປີ ກໍລະນີນີ້ **ຂ** ຜູ້ເປັນເມຍມີສິດຂໍຢ່າຮ້າງ; 7. **ກ** ແລະ **ຂ** ເປັນຜົວເມຍກັນ. ເວລາຕໍ່ມາ **ຂ** ຜູ້ເປັນເມຍໄດ້ເກີດເປັນພະຍາດຮ້າຍແຮງ ບໍ່ສາມາດປິ່ນປົວໃຫ້ຫາຍໄດ້ ໃນກໍລະນີນີ້ **ກ** ຜູ້ເປັນຜົວມີສິດຂໍຢ່າຮ້າງ; 8. **ກ** ແລະ **ຂ** ເປັນຜົວເມຍກັນ. ໃນເວລາຕໍ່ມາ **ກ** ເປັນບ້າເສຍຈິດ ຫຼື ພະຍາດທາງຈິດຮຸນແຮງ ຊຶ່ງເປັນອັນຕະລາຍຕໍ່ຕົນເອງ ແລະ ຄົນອື່ນໄດ້ ໃນກໍລະນີນີ້ **ຂ** ມີສິດຂໍຢ່າຮ້າງ;

	9. **ກ** ແລະ **ຂ** ເປັນຜົວເມຍກັນ ແຕ່ຢູ່ນຳກັນມາອີກໄລຍະໜຶ່ງ **ຂ** ໄດ້ເກີດເປັນພະຍາດຍິງ ຈົນບໍ່ສາມາດຮ່ວມປະເວນີໄດ້ ໂດຍມີການຢັ້ງຢືນຈາກແພດ ກໍລະນີນີ້ **ກ** ຜູ້ເປັນຜົວມີສິດຂໍຢ່າຮ້າງ; 10. **ກ** ແລະ **ຂ** ເປັນຜົວເມຍກັນ. ໃນເວລາຕໍ່ມາ **ກ** ຜູ້ເປັນຜົວໄດ້ໄປຕິດຜູ້ສາວ ຊຶ່ງເປັນການທໍລະມານຈິດໃຈ **ຂ** ຜູ້ເປັນເມຍ ແລະ ໄດ້ເວົ້າຄຳຫຍາບຊ້າຕໍ່ **ຂ** ເລື້ອຍໆ ຊຶ່ງເປັນສາເຫດເຮັດໃຫ້ **ກ** ແລະ **ຂ** ບໍ່ສາມາດດຳລົງຊີວິດເປັນ ຜົວ ເມຍ ກັນຕໍ່ໄປໄດ້.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 20 ຂອງກົດໝາຍວ່າດ້ວຍຄອບຄົວ ປີ 2008, ໂດຍໄດ້ປັບປຸງບາງສ່ວນ ເພື່ອໃຫ້ສອດຄ່ອງ ກັບປະມວນກົດໝາຍແພ່ງ ເຊັ່ນ: ຂໍ້ 5 ຂອງມາດຕານີ້ ແລະ ປັບປຸງບາງຄຳສັບ ໃຫ້ມີຄວາມສອດຄ່ອງໃນ ຂໍ້ 3 , 4 , 5 , 9 ແລະ ຂໍ້ 10. ຕາມຫຼັກການແລ້ວມີແຕ່ຜູ້ທີ່ຖືກລະເມີດສິດໃນສາຍພົວພັນຄອບຄົວເທົ່ານັ້ນ ຈຶ່ງມີສິດນຳໃຊ້ມາດຕານີ້ໄດ້.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 770 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ; ມາດຕາ 56 ຂອງກົດໝາຍຄອບຄົວ ຫວຽດນາມ; ມາດຕາ 1516 ຂອງປະມວນແພ່ງ ແລະ ພານິດ ໄທ.
ມາດຕາອ້າງອີງ	ມາດຕາ 95,175 ແລະ 177 ຂອງປະມວນກົດໝາຍແພ່ງ; ມາດຕາ 46,163 ແລະ 166 ຂອງກົດໝາຍວ່າດ້ວຍດຳເນີນຄະດີແພ່ງ ປີ 2012.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 177 ຂັ້ນຕອນການພິຈາລະນາການຢ່າຮ້າງຕາມຄຳຕັດສິນຂອງສານ

ເມື່ອໄດ້ຮັບຄຳຮ້ອງຟ້ອງ ຫຼື ຮ້ອງຂໍຢ່າຮ້າງແລ້ວ ສານຕ້ອງສຶກສາອົບຮົມໃຫ້ ຜົວ ເມຍ ຄືນດີກັນ. ຖ້າວ່າພວກກ່ຽວ ຫາກບໍ່ສົມຍອມຄືນດີກັນໃນທັນໃດ ກໍຕ້ອງໃຫ້ເວລາໄປຄົ້ນຄິດພາຍໃນກຳນົດເວລາສາມເດືອນ.

ພາຍຫຼັງທີ່ ຜົວ ເມຍ ຫາກໄດ້ຄົ້ນຄິດ ແລະ ບໍ່ຕົກລົງຄືນດີກັນແລ້ວ ສານກໍຈະຕັດສິນໃຫ້ ຜົວ ເມຍ ຢ່າຮ້າງກັນ ຖ້າຫາກມີສາເຫດໃດໜຶ່ງຕາມທີ່ໄດ້ກຳນົດໄວ້ໃນມາດຕາ 176 ຂອງປະມວນກົດໝາຍສະບັບນີ້. ໃນການຕັດສິນກ່ຽວກັບການຢ່າຮ້າງ ສານຕ້ອງວາງມາດຕະການປົກປັກຮັກສາຜົນປະໂຫຍດຂອງເດັກທີ່ຍັງບໍ່ທັນພົ້ນກະສຽນອາຍຸ ແລະ ຂອງ ຜົວ ຫຼື ເມຍ ທີ່ບໍ່ສາມາດອອກແຮງງານ ເພື່ອດຳລົງຊີວິດໄດ້.

ພາຍຫຼັງທີ່ສານໄດ້ຕັດສິນຢ່າຮ້າງແລ້ວ ຕ້ອງສຳເນົາຄຳຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດ ແລ້ວສົ່ງໃຫ້ເຈົ້າໜ້າທີ່ທະບຽນຄອບຄົວ ເພື່ອຈົດທະບຽນການຢ່າຮ້າງ ແລ້ວມອບໃບຢັ້ງຢືນການຢ່າຮ້າງ ໃຫ້ຄູ່ ຜົວ ເມຍ ຜູ້ລະສະບັບ.

ຈຸດປະສົງ	ເພື່ອກຳນົດ ກ່ຽວກັບຂັ້ນຕອນຂອງສານ ໃນການພິຈາລະນາ ການຢ່າຮ້າງຕາມຄຳຕັດສິນຂອງສານ.
ຕົວຢ່າງ	ໃນວັນທີ 10 ກຸມພາ 2019 **ຂ** ໄດ້ຮ້ອງຟ້ອງ **ກ** ເພື່ອຂໍຢ່າຮ້າງ, ພາຍຫຼັງສານໄດ້ຄົ້ນຄວ້າຄຳຮ້ອງແລ້ວ ໃນວັນທີ 10 ມີນາ 2019 ຜູ້ພິພາກສາ **ຄ** ໄດ້ຮຽກ **ກ** ແລະ **ຂ** ສຶກສາອົບຮົມ ໃຫ້ຄືນດີກັນ, ແຕ່ **ກ** ແລະ **ຂ** ບໍ່ຍອມຄືນດີກັນ ຜູ້ພິພາກສາ **ຄ** ຈຶ່ງໃຫ້ເວລາ **ກ** ແລະ **ຂ** ໄປຄົ້ນຄິດ ເປັນເວລາ 3 ເດືອນ.

	ຫຼັງຈາກ 3 ເດືອນ **ກ** ແລະ **ຂ** ໄດ້ມາແຈ້ງຕໍ່ສານວ່າ ພວກຕົນບໍ່ສາມາດຄືນດີນຳກັນໄດ້ແລ້ວ ຂໍໃຫ້ສານພິຈາລະນາຕັດສິນໃຫ້ພວກຕົນຢ່າຮ້າງກັນ. ແຕ່ທັງສອງຍັງມີລູກ ອາຍຸ 6 ປີ, ສານ ຈຶ່ງໄດ້ຕັດສິນໃຫ້ລູກຢູ່ນຳ **ຂ** ຜູ້ເປັນແມ່ ແລະ ໃຫ້ **ກ** ມີພັນທະລ້ຽງດູຈົນພົ້ນກະສຽນອາຍຸ. ຖ້າ **ຂ** ບໍ່ສາມາດອອກແຮງງານເພື່ອດຳລົງຊີວິດໄດ້ ສານກໍຕ້ອງໄດ້ຕັດສິນໃຫ້ **ກ** ສົ່ງຄ່າລ້ຽງດູ **ຂ** ຜູ້ເປັນເມຍ ໃນແຕ່ລະເດືອນເປັນເວລາ 2 ປີ. ສານໄດ້ລົງຄຳຕັດສິນໃຫ້ **ກ** ແລະ **ຂ** ຢ່າຮ້າງກັນ ໃນວັນທີ 10 ພຶດສະພາ 2019 ສານໄດ້ສຳເນົາຄຳຕັດສິນສົ່ງໃຫ້ເຈົ້າໜ້າທີ່ທະບຽນຄອບຄົວເມືອງ **ຈ** ບ່ອນ **ກ** ແລະ **ຂ** ອາໄສຢູ່ ເພື່ອຈົດທະບຽນການຢ່າຮ້າງ ແລ້ວມອບໃບຢັ້ງຢືນການຢ່າຮ້າງ ໃຫ້ **ກ** ແລະ **ຂ** ຜູ້ລະສະບັບ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 21/3 ວັກ 2, 3 ແລະ 4 ຂອງກົດໝາຍວ່າດ້ວຍຄອບຄົວ ປີ 2008 ເພື່ອກຳນົດໃຫ້ເຫັນກ່ຽວກັບ ຂັ້ນຕອນຂອງການພິຈາລະນາການຢ່າຮ້າງຕາມຄຳຕັດສິນຂອງສານ. ຫຼັກການທີ່ ກຳນົດໃນມາດຕານີ້ ຕິດພັນກັບກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, ເມື່ອ ຮັບຄຳຮ້ອງຟ້ອງ ຫຼື ຄຳຮ້ອງຂໍຢ່າຮ້າງ ສານຈະດຳເນີນຕາມຂັ້ນຕອນທີ່ໄດ້ກຳນົດໄວ້ ໃນມາດຕາ 46 ແລະ 198 ຂອງກົດໝາຍວ່າດ້ວຍ ການດຳເນີນຄະດີແພ່ງ. ຄຳວ່າ **"ໃນກຳນົດເວລາສາມເດືອນ"** ໃນວັກໜຶ່ງ ຂອງມາດຕານີ້ ໝາຍເຖິງໄລຍະເວລາໃດໜຶ່ງກໍໄດ້ພາຍໃນສາມເດືອນ ລວມທັງວັນທີ່ສານໄດ້ ເຮັດບົດບັນທຶກສຶກສາອົບຮົມໃຫ້ ຜົວ ແລະ ເມຍ ຄືນດີກັນ, ວັນທີ ຜົວ ເມຍ ຕົກລົງເຫັນດີສະເໜີໃຫ້ສານພິຈາລະນາຕັດສິນພາຍຫຼັງ ທີ່ໄດ້ຜ່ານການສຶກສາອົບຮົມໄດ້ ຊຶ່ງໃນກໍລະນີເຫຼົ່ານີ້ ສານສາມາດພິຈາລະນາຕັດສິນຢ່າຮ້າງໄດ້. ຄູ່ ຜົວ ເມຍ ສາມາດສະເໜີຕໍ່ສານຕັດສິນ ເວັ້ນເສຍແຕ່ ອາດມີກໍລະນີທີ່ ທັງສອງເຫັນດີໃຫ້ຕັດສິນຢ່າຮ້າງກ່ອນກຳນົດເວລາ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 175 ແລະ 176 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 178 ການບໍ່ອະນຸຍາດໃຫ້ຂໍຢ່າຮ້າງ

ຜົວ ບໍ່ມີສິດຂໍຢ່າຮ້າງໄດ້ ໃນເວລາທີ່ເມຍພວມຖືພາ ຫຼື ຫຼັງຈາກທີ່ລູກນັ້ນ ເກີດມາບໍ່ທັນຮອດໜຶ່ງປີ, ເວັ້ນເສຍແຕ່ ຜູ້ເປັນເມຍ ຫາກເປັນຜູ້ຂໍຢ່າຮ້າງ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ວ່າ ເຖິງເງື່ອນໄຂກົງກັບສາຍເຫດຂອງການຢ່າຮ້າງກໍຕາມ, ການຂໍຢ່າຮ້າງຂອງ ຜົວ ຕໍ່ ເມຍ ໃນກໍລະນີນີ້ຈະບໍ່ສາມາດເຮັດໄດ້.

ຕົວຢ່າງ	1. **ກ** ໄປປະຈຳການຢູ່ຕ່າງແຂວງ, ໃນທຸກໆ 3 ເດືອນໃດ, **ກ** ຈຶ່ງໄດ້ກັບມາຢາມຄອບຄົວໜຶ່ງຄັ້ງ. **ຂ** ຜູ້ເປັນເມຍຖືພາ, ແຕ່ **ກ** ສົງໄສວ່າ **ຂ** ຜູ້ເປັນເມຍໄດ້ມີຄວາມສຳພັນກັບຊາຍອື່ນ ທີ່ບໍ່ແມ່ນຕົນ. **ກ** ຈຶ່ງຮ້ອງຟ້ອງຂໍຢ່າຮ້າງ, ແຕ່ເນື່ອງຈາກວ່າ **ຂ** ຜູ້ເປັນເມຍກຳລັງຖືພາຢູ່, ດັ່ງນັ້ນ ການຮ້ອງຟ້ອງ ຂໍຢ່າຮ້າງຂອງ **ກ** ສານຈຶ່ງບໍ່ອານຸຍາດໃຫ້ **ກ** ຜູ້ເປັນຜົວທຳການຮ້ອງຟ້ອງ **ຂ** ຜູ້ເປັນເມຍໄດ້. 2. **ກ** ໄປປະຈຳການຢູ່ຕ່າງແຂວງ,ໃນທຸກໆ 3 ເດືອນ, **ກ** ຈຶ່ງໄດ້ກັບມາຢາມຄອບຄົວໜຶ່ງຄັ້ງ ແຕ່ການມາຢາມບ້ານໃນແຕ່ລະຄັ້ງນັ້ນ **ກ** ໄດ້ໃຊ້ຄວາມຮຸນແຮງກັບ **ຂ** ຜູ້ເປັນເມຍ, ກໍລະນີນີ້ **ຂ** ຜູ້ເປັນເມຍສາມາດ ຮ້ອງຟ້ອງຂໍຢ່າຮ້າງ **ກ** ຜູ້ເປັນຜົວໄດ້ ເຖິງວ່າ **ຂ** ຍັງຖືພາຢູ່ກໍຕາມ.
ເຫດຜົນໃນການຮັກສາເດີມ	ມາດຕານີ້ຮັກສາເນື້ອໃນເດີມ ມາດຕາ 22 ຂອງກົດໝາຍຄອບຄົວ ປີ 2008 ເນື່ອງຈາກວ່າ ຍັງໃຊ້ໄດ້ຢູ່ໃນສັງຄົມ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 20 ຂໍ້ 1 ຂອງກົດໝາຍວ່າດ້ວຍການພັດທະນາ ແລະ ການປົກປ້ອງແມ່ຍິງ 2004; ມາດຕາ 175-177 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ມາດຕານີ້ ນຳໃຊ້ແຕ່ກັບກໍລະນີ ທີ່ມີການຮ້ອງຂໍໃຫ້ສານພິຈາລະນາຢ່າຮ້າງເທົ່ານັ້ນ ບໍ່ກວມເອົາ ການຢ່າຮ້າງດ້ວຍຄວາມສະໝັກໃຈ.

ມາດຕາ 179 ການເບິ່ງແຍງ ແລະ ການລ້ຽງດູລູກ

ຜົວ ເມຍ ທີ່ໄດ້ຢ່າຮ້າງກັນແລ້ວ ມີພັນທະ ເບິ່ງແຍງ, ລ້ຽງດູ ແລະ ສຶກສາອົບຮົມລູກ.

ຖ້າວ່າ ຜົວ ເມຍ ຫາກບໍ່ເຫັນດີນຳກັນ ກ່ຽວກັບການຮັກສາ ແລະ ລ້ຽງດູລູກ ສານຕ້ອງພິຈາລະນາຕັດສິນມອບເດັກໃຫ້ຢູ່ນຳ ພໍ່ ຫຼື ແມ່ ໂດຍຖືເອົາຕາມຜົນປະໂຫຍດສູງສຸດຂອງເດັກຕາມກົດໝາຍ, ພ້ອມທັງກຳນົດການໃຊ້ຈ່າຍໃນການລ້ຽງດູລູກ ຈົນພົ້ນກະສຽນອາຍຸ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ກ່ຽວກັບ ພັນທະ ໃນການເບິ່ງແຍງ ລ້ຽງດູລູກ ທີ່ຍັງບໍ່ເຖິງກະສຽນອາຍຸ ຂອງຜົວເມຍທີ່ໄດ້ຢ່າຮ້າງກັນ.
ຕົວຢ່າງ	1. ຜົວ ເມຍ ຕົກລົງເຫັນດີຢ່າຮ້າງກັນ, ແຕ່ຜູ້ເປັນເມຍຂັດຄ້ານ ບໍ່ໃຫ້ລູກໄປຢູ່ນຳຜົວ, ເນື່ອງຈາກວ່າ ຜົວ ເປັນຄົນຕິດຢາເສບຕິດ, ມັກມີການປະພຶດທີ່ບໍ່ເໝາະສົມຈຶ່ງຄິດວ່າບໍ່ສາມາດລ້ຽງດູລູກໄດ້. ສະນັ້ນ, ຜູ້ເປັນ ຜົວຈຶ່ງຮ້ອງຟ້ອງຕໍ່ສານ ໃນປະເດັນຂັດແຍ່ງ ກ່ຽວກັບການລ້ຽງດູລູກ. **ກ** (ຜົວ) ແລະ **ຂ** (ເມຍ) ແຕ່ງດອງກັນແລ້ວ, ແຕ່ **ກ** ມັກຫຼິ້ນການພະນັນ ແລະ ດື່ມເຫຼົ້າ ເມື່ອເຫຼົ້າເຂົ້າປາກກໍມັກອາລະວາດ ເຮັດໃຫ້ **ຂ** ຜູ້ເປັນເມຍ ຖືກກະທົບທາງດ້ານຈິດໃຈ ແລະ ຍາກທີ່ຈະຢູ່ຮ່ວມກັນໄດ້. ສະນັ້ນ **ຂ** ຈຶ່ງໄດ້ຮ້ອງຂໍຢ່າຮ້າງຕໍ່ສານ. ສານໄດ້ໃຫ້ເວລາ **ກ** ແລະ **ຂ** 3 ເດືອນ ໃນການຄົ້ນຄິດ ເພື່ອໃຫ້ທັງສອງສາມາດກັບຄືນດີກັນໄດ້, ແຕ່ **ຂ** ກໍບໍ່ໄດ້ປ່ຽນເຈດຈຳນົງທີ່ຈະຢ່າຮ້າງ. ສານໄດ້ອີງໃສ່ສາເຫດຂອງການຢ່າຮ້າງ ຂໍ້ທີ 2 ແລະ ຂໍ້ 10 ຂອງມາດຕາ 176 ຕັດສິນໃຫ້ຢ່າຮ້າງ, ເນື່ອງຈາກ ທັງສອງມີລູກທີ່ຍັງບໍ່ທັນເຖິງກະສຽນອາຍຸ, ສະນັ້ນ ສານຈຶ່ງຕ້ອງໄດ້ພິຈາລະນາວ່າ ຫຼັງຈາກຢ່າຮ້າງກັນແລ້ວແມ່ນໃຜຈະເປັນຜູ້ເບິ່ງແຍງລ້ຽງດູລູກ, ຈະຮັບຜິດຊອບຄ່າ

	ລ້ຽງດູລູກຄືແນວໃດ, ຫຼັງຈາກຢ່າຮ້າງແລ້ວ ຊີວິດການເປັນຢູ່ ແລະ ຄ່າຄອງຊີບຂອງ **ຂ** ຈະເປັນຄືແນວໃດ. ພາຍຫຼັງທີ່ສານໄດ້ຕັດສິນຢ່າຮ້າງແລ້ວ ຕ້ອງສຳເນົາຄຳຕັດສິນ ທີ່ໃຊ້ໄດ້ຢ່າງເດັດຂາດ ແລ້ວສົ່ງໃຫ້ເຈົ້າໜ້າທີ່ທະບຽນຄອບຄົວ ເພື່ອຈົດທະບຽນການຢ່າຮ້າງ ແລ້ວມອບໃບຢັ້ງຢືນການຢ່າຮ້າງໃຫ້ **ກ** ແລະ **ຂ** ຜູ້ລະສະບັບ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 23 ຂອງກົດໝາຍວ່າດ້ວຍຄອບຄົວ ປີ 2008 ເຊິ່ງໄດ້ປັບປຸງເນື້ອໃນຄືນໃໝ່ ຈາກຄຳສັບ ການຮັກສາ ປ່ຽນມາເປັນການເບິ່ງແຍງ ເພື່ອໃຫ້ມີຄວາມລະອຽດ ແລະ ໃຫ້ຜູ້ອ່ານເຂົ້າໃຈ ໃນມາດຕາດັ່ງກ່າວ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 766 ວັກ 2 ແລະ 819 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ; ມາດຕາ 1520 ຂອງປະມວນກົດໝາຍແພ່ງ ແລະ ພານິດ ໄທ.
ມາດຕາອ້າງອີງ	ມາດຕາ 138 ວັກ 1, 143,164, 177 ວັກ 2 ,191 ຂໍ້ 3, 215-217 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ. ສາຍພົວພັນ ລະຫວ່າງ 'ມາດຕາ 20 ຂໍ້ 2 ຂອງ ກົດໝາຍວ່າດ້ວຍການພັດທະນາ ແລະ ປົກປ້ອງແມ່ຍິງ' ສະບັບປີ 2014. ໃນເວລາ ເມຍ ຖືພາ ຫຼື ມີອາຍຸບໍ່ຮອດໜຶ່ງປີ ຜົວ ບໍ່ມີສິດຂໍຢ່າຮ້າງ ແຕ່ ເມຍ ມີສິດຂໍຢ່າຮ້າງໄດ້.

ມາດຕາ 180 ການຮ້ອງຂໍຄ່າລ້ຽງດູ ເມຍ ຫຼື ຜົວ

ໃນເວລາພິຈາລະນາການຢ່າຮ້າງ ຫຼື ພາຍຫຼັງທີ່ໄດ້ຈົດທະບຽນການຢ່າຮ້າງກັນແລ້ວ ເມຍ ຫຼື ຜົວ ທີ່ເຈັບເປັນເນື່ອງຈາກສາຍພົວພັນ ຜົວ ເມຍ ໃນເມື່ອກ່ອນ ແລະ ຂາດເຂີນ ຊຶ່ງບໍ່ສາມາດຈະລ້ຽງຕົນເອງໄດ້ ກໍມີສິດຮ້ອງຂໍໃຫ້ສານພິຈາລະນາຕັດສິນໃຫ້ຜົວ ຫຼື ເມຍ ຈ່າຍຄ່າລ້ຽງດູໄດ້ ໃນກໍລະນີທີ່ຝ່າຍທີ່ຖືກຮ້ອງຂໍຫາກມີຄວາມສາມາດທາງດ້ານເສດຖະກິດ ແຕ່ການຈ່າຍຄ່າລ້ຽງດູນັ້ນ ບໍ່ໃຫ້ເກີນສອງປີ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ ກ່ຽວກັບເງື່ອນໄຂ ແລະ ຂອບເຂດ ພັນທະຈ່າຍຄ່າລ້ຽງດູ ໃຫ້ແກ່ຜົວ ຫຼື ເມຍ ໃນກໍລະນີຢ່າຮ້າງກັນແລ້ວ ແຕ່ອີກຝ່າຍໜຶ່ງຂາດເຂີນລາຍໄດ້.
ຕົວຢ່າງ	**ກ** (ຜົວ) ແລະ **ຂ** (ເມຍ) ເປັນ ຜົວ ເມຍ ກັນມາເປັນເວລາ 3 ປີ, ຕໍ່ມາ **ຂ** ບໍ່ສາມາດດຳລົງຊີວິດຢູ່ນຳກັນຕໍ່ໄປໄດ້ ຈຶ່ງໄດ້ຢ່າຮ້າງກັນຍ້ອນວ່າ **ກ** ໄດ້ໃຊ້ຄວາມຮຸນແຮງຈົນເຮັດໃຫ້ **ຂ** ໄດ້ຮັບບາດເຈັບຫຼາຍຄັ້ງ. ພາຍຫຼັງທີ່ໄດ້ຈົດທະບຽນຢ່າຮ້າງກັນມາໄດ້ 1 ປີ **ຂ** ມີອາການເຈັບກະດູກສັນຫຼັງ ບໍ່ສາມາດເຮັດວຽກໄດ້ເປັນປົກກະຕິ ຈຶ່ງເຮັດໃຫ້ຊີວິດຂາດເຂີນລາຍໄດ້ ບໍ່ສາມາດລ້ຽງຕົນເອງໄດ້ຍ້ອນຜົນກະທົບຂອງ **ກ** ໄດ້ກະທຳໃນເມື່ອກ່ອນ, **ຂ** ຈຶ່ງໄດ້ຮ້ອງຂໍຄ່າລ້ຽງດູຈາກ **ກ** ຍ້ອນເຫັນວ່າຜູ້ກ່ຽວມີວຽກເຮັດງານທຳທີ່ດີ ສາມາດມີລາຍຮັບແຕ່ລະເດືອນປະມານ 10.000.000 ກີບ. **ຂ** ຈຶ່ງໄດ້ຮ້ອງຂໍຄ່າລ້ຽງດູຈາກ **ກ** ເປັນເງິນເດືອນລະ 500.000 ກີບ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 24 ຂອງກົດໝາຍວ່າດ້ວຍຄອບຄົວ ປີ 2008 ເພາະວ່າ ໄດ້ເພີ່ມເນື້ອໃນ ໃນເວລາພິຈາລະນາການຢ່າຮ້າງ ຫຼື ພາຍຫຼັງທີ່ໄດ້ຈົດທະບຽນການຢ່າຮ້າງ ບໍ່ສະເພາະແຕ່ຫຼັງຈາກການຢ່າຮ້າງແລ້ວ ແຕ່ສາມາດຮ້ອງຂໍຄ່າລ້ຽງ ດູໄດ້ໃນເວລາພິຈາລະນາຂອງສານ. ສະນັ້ນ ຈຶ່ງໄດ້ກຳນົດໃຫ້ມີຄວາມຊັດເຈນຂຶ້ນທາງດ້ານເນື້ອໃນ ເພື່ອໃຫ້ເຂົ້າໃຈງ່າຍ.

ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	1) ລະບຽບການກ່ຽວກັບການລ້ຽງດູ ຫຼັງຈາກການຢ່າຮ້າງ; 2) ລະບຽບຄວາມເປັນຈິງກ່ຽວກັບການລ້ຽງດູ ຫຼັງຈາກການຢ່າຮ້າງໂດຍຜ່ານການແບ່ງສິນສົມສ້າງ; ມາດຕາ 159 ຂອງປະມວນກົດໝາຍແພ່ງ ເຢຍລະມັນ; ມາດຕາ 21 ຂອງກົດໝາຍຂອງອັງກິດ (Matrimonial Causes Act 1973); ມາດຕາ 768 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 181 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 181 ການແບ່ງປັນຊັບເດີມ ແລະ ສິນສົມສ້າງ

ການແບ່ງປັນ ຊັບເດີມ ແລະ ສິນສົມສ້າງຂອງ ຜົວ ເມຍ ໃຫ້ປະຕິບັດ ດັ່ງນີ້:

1. ຊັບເດີມຂອງຝ່າຍໃດ ກໍໃຫ້ເປັນກຳມະສິດຂອງຝ່າຍນັ້ນ;
2. ສິນສົມສ້າງຂອງ ຜົວ ເມຍ ໃຫ້ແບ່ງປັນກັນຄົນລະເຄິ່ງ, ເວັ້ນເສຍແຕ່ ຜົວ ຫຼື ເມຍ ຫາກເປັນຜູ້ກະທຳຜິດໃນສະຖານທຳມິດສະຈານ, ສໍ້ໂກງ ຫຼື ຍັກຍອກສິນສົມສ້າງ ໂດຍມີຄຳຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດ, ຝ່າຍທີ່ຜິດນັ້ນ ກໍຈະໄດ້ຮັບພຽງແຕ່ ໜຶ່ງສ່ວນສາມ ຂອງສິນສົມສ້າງເທົ່ານັ້ນ.

ໃນກໍລະນີ ທີ່ລູກຍັງບໍ່ທັນພົ້ນກະສຽນອາຍຸ ຫາກໄດ້ຢູ່ນຳຜູ້ໃດ ຜູ້ນັ້ນ ກໍຈະໄດ້ຮັບສ່ວນແບ່ງ ໜຶ່ງສ່ວນສາມ ຂອງສິນສົມສ້າງນັ້ນ ເພື່ອເປັນການລ້ຽງດູລູກ. ໃນກໍລະນີທີ່ບໍ່ພຽງພໍກັບຄ່າລ້ຽງດູລູກ ຕາມທີ່ໄດ້ກຳ ນົດໄວ້ໃນມາດຕາ 217 ຂອງປະມວນກົດໝາຍສະບັບນີ້ ໃຫ້ ພໍ່ ຫຼື ແມ່ ທີ່ລູກບໍ່ຢູ່ນຳນັ້ນ ສືບຕໍ່ປະຕິບັດພັນທະ ຈົນກວ່າເດັກຈະພົ້ນກະສຽນອາຍຸ. ສ່ວນສິນສົມສ້າງທີ່ເຫຼືອນັ້ນ ໃຫ້ ຜົວ ເມຍ ແບ່ງປັນກັນຄົນລະເຄິ່ງ.

ສິນສົມສ້າງ ຈະໄດ້ແບ່ງປັນກັນ ພາຍຫຼັງທີ່ ຜົວ ເມຍ ນັ້ນ ໄດ້ຢ່າຮ້າງກັນ.

ສິນສົມສ້າງ ອາດຈະຖືກແບ່ງປັນກ່ອນການຢ່າຮ້າງກໍໄດ້ ຕາມການຮ້ອງຟ້ອງ ຫຼື ຮ້ອງຂໍ ຂອງຝ່າຍໃດ ໜຶ່ງ ຕາມທີ່ໄດ້ກຳນົດໃນວັກເທິງນີ້ ໃນກໍລະນີ ດັ່ງນີ້:

1. ຜົວ ເມຍ ຫາກໄດ້ແຍກກັນຢູ່;
2. ຜົວ ຫຼື ເມຍ ຫາກໄດ້ລັກເອົາສິນສົມສ້າງ ໄປນຳໃຊ້ໃນທາງທີ່ບໍ່ຖືກຕ້ອງ ຫຼື ຫາກບໍ່ມີຄວາມບໍລິສຸດໃຈຕໍ່ສິນສົມສ້າງ;
3. ຜົວ ຫຼື ເມຍ ຫາກໄດ້ຫາຍສາບສູນ ຕາມຄຳຕັດສິນຂອງສານ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ ກ່ຽວກັບ ມາດຕະຖານ ແລະ ວິທີການ ແບ່ງປັນຊັບສົມບັດຂອງ ຜົວ ເມຍ ໃນກໍລະນີ ຜົວ ເມຍ ໄດ້ຢ່າຮ້າງກັນ.
ຕົວຢ່າງ	1. **ກ** ແລະ **ຂ** ແຕ່ງດອງນຳກັນ, ມີລູກຮ່ວມກັນ 1 ຄົນ ອາຍຸ 3 ປີ ກ່ອນແຕ່ງດອງ **ກ** ມີທີ່ດິນໜຶ່ງຕອນ ມູນຄ່າ 300.000.000 ກີບ ແລະ **ຂ** ມີຄຳ 5 ບາດ ຫຼັງຈາກນັ້ນ ທັງສອງໄດ້ຫາຮ່ວມກັນມີຊັບສົມບັດທັງໝົດເປັນດິນ ແລະ ເຮືອນ 400.000.000 ກີບ, ລົດກະບະ 1 ຄັນມູນຄ່າ 500.000.000 ກີບ. **ກ** ແລະ **ຂ** ໄດ້ຢ່າຮ້າງກັນ ແລະ ຫຼັງການຢ່າຮ້າງ ໄດ້ມີການຕົກລົງໃຫ້ **ຂ** ເປັນຜູ້ດູແລລູກ, ແຕ່ເນື່ອງຈາກວ່າ ການແບ່ງສິນສົມສ້າງ ແລະ ລ້ຽງດູ ລູກນັ້ນ ບໍ່ສາມາດຕົກລົງກັນໄດ້ ຈຶ່ງໄດ້ຮ້ອງຂໍຕໍ່ສານ. ສານໄດ້ຮັບຮູ້ວ່າ: 1). ຊັບເດີມທີ່ເປັນທີ່ດິນ ແລະ ຄຳ ແມ່ນໃຫ້ກັບຄືນຂອງໃຜລາວ ແກ່ **ກ** ແລະ **ຂ**, 2). ສິນສົມສ້າງ ຈຳນວນ 900.000.000 ກີບ ແມ່ນໃຫ້ແບ່ງ 300.000.000 ກີບ ທີ່ເປັນໜຶ່ງສ່ວນສາມ ໃຫ້ແກ່ **ຂ** ເພື່ອໃຫ້ເປັນສ່ວນຂອງ ລູກທີ່ຍັງບໍ່ເຖິງກະສຽນອາຍຸ ຊັບສົມບັດທີ່ຍັງເຫຼືອແມ່ນແບ່ງປັນສອງສ່ວນ ເທົ່າກັນ 300.000.000 ກີບ ໃຫ້ກັບທັງສອງຄົນ.

	4. **ກ** ແລະ **ຂ** ແຕ່ງດອງກັນ, ມີລູກອາຍຸ 3 ປີ 1 ຄົນ, ກ່ອນແຕ່ງດອງ **ກ** ມີທີ່ດິນໜຶ່ງຕອນ ມູນຄ່າ 300.000.000 ກີບ ແລະ **ຂ** ມີຄ່ຳ 5 ບາດ ຫຼັງຈາກນັ້ນ ທັງສອງໄດ້ຫາຮ່ວມກັນ ມີຊັບທັງໝົດເປັນທີ່ດິນ ແລະ ເຮືອນ 400.000.000 ກີບ, ລົດກະບະ 1 ຄັນມູນຄ່າ 500.000.000 ກີບ ເນື່ອງຈາກ **ກ** ໄດ້ນອກໃຈ ໄປຢູ່ຮ່ວມກັບ **ຄ**, **ຂ** ຈຶ່ງໄດ້ຍື່ນຮ້ອງຟ້ອງຂໍຢ່າຮ້າງໃນເຫດຜົນ ຕາມມາດຕາ 176 ວັກ 1. ສານຕັດສິນແບ່ງເງິນ 300.000.000 ກີບ ໃຫ້ລູກ ຊຶ່ງ **ຂ** ເປັນຜູ້ດູແລລູກ, ເນື່ອງຈາກ **ກ** ໄດ້ມີການປະພຶດນອກໃຈ ອີງຕາມມາດຕາ 181 ວັກ 1 ຂໍ້ 2 ປັນເງິນຈຳນວນ 200.000.000 ກີບ ທີ່ເປັນຈຳນວນ ໜຶ່ງສ່ວນສາມ ຂອງສິນສົມສ້າງ ໃຫ້ **ກ** ແລະ ຈຳນວນ 400.000.000ກີບ ໃຫ້ **ຂ**. 5. **ກ** ແລະ **ຂ** ແຕ່ງດອງກັນ, ມີລູກອາຍຸ 3 ປີ 1 ຄົນ, ກ່ອນແຕ່ງດອງ **ກ** ມີທີ່ດິນ ໜຶ່ງຕອນມູນຄ່າ 300.000.000 ກີບ ແລະ **ຂ** ມີຄ່ຳ 5 ບາດ ຫຼັງຈາກນັ້ນ ທັງສອງໄດ້ຫາຮ່ວມກັນ ມີຊັບທັງໝົດເປັນທີ່ດິນ ແລະ ເຮືອນ 400.000.000 ກີບ, ລົດກະບະ 1 ຄັນມູນຄ່າ 500.000.000 ກີບ. **ກ** ໄດ້ຂາຍລົດກະບະ ໂດຍບໍ່ໄດ້ຮັບການຕົກລົງເຫັນດີຈາກ **ຂ** ແລະ ໄດ້ໃຊ້ເງິນຈຳນວນດັ່ງກ່າວ ໃນການພະນັນຈົນໝົດ. **ຂ** ຈຶ່ງໄດ້ຮ້ອງຟ້ອງຕໍ່ສານໃຫ້ແບ່ງທີ່ດິນ ແລະ ເຮືອນທີ່ຍັງເຫຼືອ.
ເຫດຜົນໃນການປັບປຸງ	ມາດຕານີ້ໄດ້ຮັບການປັບປຸງມາຈາກ ມາດຕາ 28 ກົດໝາຍວ່າດ້ວຍຄອບຄົວ ປີ 2008 ເພື່ອເຮັດໃຫ້ເນື້ອໃນມີຄວາມຊັດເຈນ, ຮັດກຸມ ແລະ ເຂົ້າໃຈງ່າຍຂຶ້ນ ໂດຍວັກທີ 4 ໄດ້ມີການກຳນົດເປັນກໍລະນີ ແລະ ໄດ້ເພີ່ມກ່ຽວກັບກໍລະນີການ ຫາຍສາບສູນ. ໃນກໍລະນີທີ່ ບໍ່ພຽງພໍກັບຄ່າລ້ຽງດູລູກ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 217 ຂອງປະມວນກົດໝາຍແພ່ງ ໃຫ້ພໍ່ ຫຼື ແມ່ ທີ່ລູກບໍ່ຢູ່ນຳນັ້ນ ສືບຕໍ່ປະຕິບັດຈົນກວ່າ ເດັກຈະພົ້ນກະສຽນອາຍຸ. ປັບປຸງປະໂຫຍກທີ່ວ່າ ສິນສົມສ້າງ ອາດຖືກແບ່ງປັນ ຕາມການສະເໜີຂອງຝ່າຍ ໃດໜຶ່ງກໍໄດ້ ປ່ຽນມາເປັນ ສິນສົມສ້າງ ອາດຈະຖືກແບ່ງປັນ ກ່ອນການຢ່າຮ້າງກໍ ໄດ້ ຕາມການຮ້ອງຟ້ອງ ຫຼື ຮ້ອງຂໍ ຂອງຝ່າຍໃດໜຶ່ງ ເພື່ອໃຫ້ຊັດເຈນ ແລະ ມີ ຄວາມເຂົ້າໃຈງ່າຍຂຶ້ນ ໃນການຈັດຕັ້ງປະຕິບັດ. ຄຳວ່າບໍ່ມີຄວາມບໍລິສຸດໃຈຕໍ່ສິນສົມສ້າງ ໝາຍເຖິງການຊຸກເຊື່ອງ, ເຊື່ອງອຳລາຍ ໄດ້, ໄດ້ຫຼາຍກວ່າໜ້ອຍ, ມີກວ່າບໍ່ມີ ແລະ ອື່ນໆທີ່ຄ້າຍຄືກັນ.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງ ຂອງປະເທດອື່ນ	ມາດຕາ 1532 ແລະ 1534 ຂອງປະມວນກົດໝາຍແພ່ງ ແລະ ພານິດໄທ; ມາດຕາ 59 ຂອງກົດໝາຍແຕ່ງດອງ ແລະ ຄອບຄົວຫວຽດນາມ 2014.
ມາດຕາອ້າງອີງ	ມາດຕາ 95,167,168,169,173,176,179, 215 ແລະ 217 ຂອງປະມວນ ກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 182 ຄ່າດອງຄ້າງ

ຄ່າດອງຄ້າງ ແມ່ນ ຈຳນວນເງິນ ຫຼື ວັດຖຸ ທີ່ຍັງບໍ່ທັນໄດ້ມອບຢ່າງຄົບຖ້ວນ ຕາມທີ່ໄດ້ກຳນົດໃນບົດ ບັນທຶກການສູ່ຂໍ.

ໃນກໍລະນີທີ່ມີການຢ່າຮ້າງກັນ ຝ່າຍຊາຍ ຕ້ອງຮັບຜິດຊອບຈ່າຍຄ່າດອງຄ້າງໃຫ້ແກ່ຝ່າຍຍິງ ຖ້າຫາກ ຝ່າຍຊາຍເປັນຜູ້ມີຄວາມຜິດ. ໃນກໍລະນີທີ່ຝ່າຍຍິງ ຫາກເປັນຜູ້ມີຄວາມຜິດ ຄ່າດອງຄ້າງນັ້ນ ກໍຈະຕົກໄປ.

ຈຸດປະສົງ	ເພື່ອກຳນົດກ່ຽວກັບ ການຈັດການຄ່າດອງ ທີ່ຍັງຄ້າງຢູ່.
ຕົວຢ່າງ	1. **ກ** ຝ່າຍຊາຍ ໄດ້ໄປສູ່ຂໍ **ຂ** ເປັນເມຍ ຊຶ່ງໄດ້ຕົກລົງກ່ຽວກັບຄ່າດອງ ຈຳນວນ 20.000.000 ກີບ ແລະ ຄຳ 10 ບາດ ແລະ ໄດ້ວາງຄ່າດອງກ່ອນ ພຽງແຕ່ 20.000.000 ກີບ ແລະ ຄຳ 5 ບາດ ໝາຍຄວາມວ່າ ຍັງຄ້າງຢູ່ເປັນຄຳ 5 ບາດ. 2. **ກ** (ຜົວ) ມີຄວາມຜິດ **ຂ** (ເມຍ) ຈຶ່ງໄດ້ຮ້ອງຂໍຢ່າຮ້າງ, ກໍລະນີນີ້ຕ້ອງມອບຄ່າດອງທີ່ຍັງຄ້າງຢູ່ໃຫ້ **ຂ.** 3. **ກ** ເປັນຄົນປ່ວຍທາງຈິດ (ມາດຕາ 176 ວັກ1 ຂໍ້8) ໃນເວລາຢ່າຮ້າງກັນ ກໍບໍ່ແມ່ນຄວາມຜິດຂອງ **ກ** ສະນັ້ນ **ກ** ບໍ່ຈຳເປັນຕ້ອງມອບຄ່າດອງທີ່ຍັງຄ້າງຢູ່ໃຫ້ **ຂ.** 4. **ຂ** (ເມຍ) ໄດ້ທຳມິດສາຈານ ເຮັດໃຫ້ **ກ** (ຜົວ) ຮ້ອງຂໍຢ່າຮ້າງ, ກໍລະນີນີ້ **ກ** ບໍ່ມີພັນທະຕ້ອງມອບຄ່າດອງ ທີ່ຍັງຄ້າງຢູ່ນັ້ນໃຫ້ **ຂ.**
ເຫດຜົນໃນການຮັກສາເດີມ	ມາດຕານີ້ຮັກສາເດີມເນື້ອໃນຂອງ ມາດຕາ 7/1 ຂອງກົດໝາຍຄອບຄົວ ປີ 2008 ຄຳວ່າຄ່າດອງຄ້າງໄດ້ອະທິບາຍໃນ ມາດຕາ 1/3 ຂໍ້ 4 ຂອງກົດໝາຍວ່າດ້ວຍຄອບຄົວ ປີ 2008 ຊຶ່ງໝາຍເຖິງ " ຄ່າດອງຄ້າງໝາຍເຖິງ ຄ່າດອງທີ່ຍັງບໍ່ທັນໄດ້ຈ່າຍຄືບຖ້ວນຕາມທີ່ໄດ້ຕົກລົງກັນໃນເວລາສູ່ຂໍ " ຊຶ່ງໄດ້ກຳນົດໄວ້ວັກ 1 ຂອງມາດຕາ 182 ຂອງປະມວນກົດໝາຍແພ່ງດັ່ງນີ້ "ຄ່າດອງຄ້າງແມ່ນ ຈຳນວນເງິນ ຫຼື ວັດຖຸທີ່ຍັງບໍ່ທັນໄດ້ຈ່າຍ ຫຼື ບໍ່ທັນໄດ້ມອບຄືບຖ້ວນ ຕາມທີ່ຕົກລົງກັນໃນເວລາ ສູ່ຂໍ " ເພື່ອເຮັດໃຫ້ຄວາມເຂົ້າໃຈກ່ຽວກັບຄ່າດອງ ຄ້າງມີຄວາມເຂົ້າໃຈ ແລະ ຊັດເຈນຍິ່ງຂຶ້ນ
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງ ຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 147, 148, 390, 392,393 ແລະ 481 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ຂ. ການຢ່າຮ້າງທີ່ພົວພັນກັບຕ່າງປະເທດ

ມາດຕາ 183 ການຢ່າຮ້າງ ລະຫວ່າງ ພົນລະເມືອງລາວ ກັບ ຄົນຕ່າງປະເທດ, ຄົນຕ່າງດ້າວ ຫຼື ຄົນບໍ່ມີສັນຊາດ ຢູ່ ສປປ ລາວ

ການຢ່າຮ້າງ ລະຫວ່າງ ພົນລະເມືອງລາວ ກັບ ຄົນຕ່າງປະເທດ, ຄົນຕ່າງດ້າວ ຫຼື ຄົນບໍ່ມີສັນຊາດ ດ້ວຍກັນ ຢູ່ ສປປ ລາວ ໃຫ້ປະຕິບັດຕາມປະມວນກົດໝາຍສະບັບນີ້.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນ ເຖິງຫຼັກການທີ່ຈະນຳມາໃຊ້ໃນການຢ່າຮ້າງ ຂອງບ່າວສາວຜູ້ໃດຜູ້ໜຶ່ງທີ່ເປັນພົນລະເມືອງລາວ ກັບ ອີກຝ່າຍໜຶ່ງທີ່ເປັນຄົນຕ່າງປະເທດ, ຄົນຕ່າງດ້າວ ຫຼື ຄົນບໍ່ມີສັນຊາດ ຢ່າຮ້າງກັນໃນເວລາທີ່ຢູ່ດິນແດນຂອງ ສປປ ລາວ.
ຕົວຢ່າງ	**ກ** ຜູ້ເປັນຜົວ (ເປັນຄົນຕ່າງປະເທດ) ແລະ **ຂ** ຜູ້ເປັນເມຍ (ເປັນຄົນລາວ) ໄດ້ແຕ່ງດອງກັນ. ແຕ່ຍ້ອນວ່າຮີດຄອງ ວັດທະນະທຳ, ຄວາມເຊື່ອຖື ແລະ ວິຖີການດຳລົງຊີວິດແຕກຕ່າງກັນ ເຖິງແມ່ນທັງສອງຈະຍັງຮັກກັນຢູ່ ແຕ່ທັງສອງບໍ່ສາມາດປັບຕົວເຂົ້າຫາກັນໄດ້ເຖິງແມ່ນວ່າຈະພະຍາຍາມແລ້ວຫຼາຍປີ ແຕ່ບໍ່ສາມາດ ປັບຕົວເຂົ້າຫາໄດ້, ດັ່ງນັ້ນ **ກ** ແລະ **ຂ** ຈຶ່ງຕົກລົງຢ່າຮ້າງກັນດ້ວຍຄວາມສະໝັກ ໃຈ ແລະ ປະຕິບັດຕາມຂັ້ນຕອນຂອງການຢ່າຮ້າງ ແລະ ການຈົດທະບຽນ ຢ່າຮ້າງຕາມກົດໝາຍຂອງ ສປປ ລາວ.

ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 48 ກົດໝາຍວ່າດ້ວຍຄອບຄົວ 2008 ຊຶ່ງໄດ້ກຳນົດຂັ້ນຕອນການຢ່າຮ້າງ ທັງຢູ່ພາຍໃນ ແລະ ນອກປະເທດເພື່ອເຮັດໃຫ້ ຈະແຈ້ງຂຶ້ນ ໂດຍການແປງຂັ້ນຕອນ ການຢ່າຮ້າງອອກທັງຢູ່ພາຍໃນ ແລະ ນອກປະເທດ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 171 – 182 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 184 ການຢ່າຮ້າງ ລະຫວ່າງ ຄົນຕ່າງປະເທດ, ຄົນຕ່າງດ້າວ ຫຼື ຄົນບໍ່ມີສັນຊາດ ດ້ວຍກັນ ຢູ່ ສປປ ລາວ

ການຢ່າຮ້າງ ລະຫວ່າງ ຄົນຕ່າງປະເທດ, ຄົນຕ່າງດ້າວ ຫຼື ຄົນບໍ່ມີສັນຊາດດ້ວຍກັນ ຢູ່ ສປປ ລາວ ໃຫ້ປະຕິບັດຕາມ ທີ່ໄດ້ກຳນົດໄວ້ໃນມາດຕາ 171 ຫາ 182 ຂອງປະມວນກົດໝາຍສະບັບນີ້.

ຈຸດປະສົງ	ເພື່ອເຮັດໃຫ້ເຫັນເຖິງຫຼັກການ ທີ່ຈະນຳມາໃຊ້ໃນການຢ່າຮ້າງຂອງ ບ່າວ ສາວ ຜູ້ໃດຜູ້ໜຶ່ງ ທີ່ເປັນຄົນຕ່າງປະເທດ, ຄົນຕ່າງດ້າວ ຫຼື ຄົນບໍ່ມີສັນຊາດ ຫຼື ດ້ວຍກັນເອງ ຢ່າຮ້າງກັນໃນເວລາທີ່ຢູ່ດິນແດນຂອງ ສປປ ລາວ.
ຕົວຢ່າງ	**ກ** ແລະ **ຂ** ເປັນຜົວເມຍກັນ (ທັງສອງເປັນຄົນຕ່າງປະເທດ) ໄດ້ມາໃສຢູ່ ສປປ ລາວ, ຕໍ່ມາໄດ້ສອງປີ **ກ** ແລະ **ຂ** ໄດ້ຕົກລົງຢ່າຮ້າງກັນ. ດັ່ງນັ້ນ, ທັງສອງໃຫ້ປະຕິບັດຕາມຂັ້ນຕອນຂອງການຢ່ານ້ຳ ແລະ ການຈົດທະບຽນຢ່າຮ້າງຕາມກົດໝາຍ ຂອງ ສ ປປ ລາວ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 48 ກົດໝາຍວ່າດ້ວຍຄອບຄົວ ປີ 2008 ວັກ 1 ຊຶ່ງໄດ້ກຳນົດຂັ້ນຕອນການຢ່າຮ້າງທັງຢູ່ພາຍໃນ ແລະ ນອກປະເທດ ເພື່ອເຮັດໃຫ້ຈະແຈ້ງຂຶ້ນ ໂດຍການແປງຂັ້ນຕອນ ການຢ່າຮ້າງອອກທັງຢູ່ພາຍໃນ ແລະ ນອກປະເທດ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 171-182 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 185 ການຢ່າຮ້າງ ລະຫວ່າງ ພົນລະເມືອງລາວ ດ້ວຍກັນ ຢູ່ຕ່າງປະເທດ

ການຢ່າຮ້າງ ລະຫວ່າງ ພົນລະເມືອງລາວດ້ວຍກັນ ຢູ່ຕ່າງປະເທດ ໃຫ້ປະຕິບັດຕາມກົດໝາຍຂອງ ສ ປປ ລາວ ຫຼື ກົດໝາຍຂອງປະເທດ ບ່ອນ ຜົວ ເມຍ ອາໄສຢູ່.

ການຢ່າຮ້າງ ລະຫວ່າງ ພົນລະເມືອງລາວດ້ວຍກັນ ຢູ່ຕ່າງປະເທດ ຕ້ອງໃຫ້ສະຖານທູດ ຫຼື ສະຖານກົງສຸນລາວ ຮັບຮູ້ນຳ.

ຈຸດປະສົງ	ເພື່ອໃຫ້ຮູ້ ຫຼັກການ ທີ່ຈະນຳມາໃຊ້ໃນການຢ່າຮ້າງ ລະຫວ່າງ ພົນລະເມືອງລາວ ດ້ວຍກັນ ທີ່ຢູ່ຕ່າງປະເທດ.

ຕົວຢ່າງ	**ກ** ແລະ **ຂ** ໄດ້ແຕ່ງດອງກັນເປັນ ຜົວ ເມຍ ທີ່ຖືກຕ້ອງຕາມກົດໝາຍ ຢູ່ ສປປ ລາວ, ພາຍຫຼັງການແຕ່ງດອງ ພວກກ່ຽວໄດ້ໄປເຮັດວຽກຢູ່ຕ່າງປະເທດ ເປັນເວລາ ຫຼາຍປີ ໂດຍບໍ່ໄດ້ຕັດສັນຊາດ. ໃນເວລາຕໍ່ມາ **ກ** ຜູ້ເປັນຜົວຢາກຢ່າຮ້າງ ກັບ **ຂ** ໃນກໍລະນີແບບນີ້ ແມ່ນໃຫ້ປະຕິບັດຕາມກົດໝາຍຂອງ ສປປ ລາວ ຫຼື ຕາມກົດ ໝາຍຂອງປະເທດ ທີ່ຜົວ ເມຍ ອາໄສຢູ່. ໃນກໍລະນີໃດກໍຕາມ ຕ້ອງແຈ້ງໃຫ້ສະ ຖານທູດ ຫຼື ສະຖານກົງສູນຂອງ ສປປ ລາວ ຮັບຮູ້ນຳ.
ເຫດຜົນໃນການປັບປຸງ	ມາດຕານີ້ ໄດ້ປັບປຸງມາຈາກ ມາດຕາ 50 ຂອງກົດໝາຍ ວ່າດ້ວຍຄອບຄົວ ປີ 2008 ໂດຍເພີ່ມທາງເລືອກ ໃນການໃຊ້ກົດໝາຍ ຂອງ ສປປ ລາວ ໄດ້. ໄດ້ ຕັດວັກ 2 ຂອງມາດຕາ 50 ນັ້ນອອກ ເນື່ອງຈາກເຫັນວ່າ ບໍ່ມີຄວາມຈຳເປັນ ກຳນົດກໍໄດ້ ເພາະຫຼັກການຢ່າຮ້າງ ຂອງຄົນລາວ ຢູ່ ສປປ ລາວ ກໍຕ້ອງນຳໃຊ້ ກົດໝາຍ ຂອງ ສປປ ລາວ ຊຶ່ງເປັນທີ່ຮັບຮູ້ ແລະ ເຂົ້າໃຈໄດ້ຢູ່ແລ້ວ. ໄດ້ເພີ່ມ ເນື້ອໃນໃໝ່ເຂົ້າໃນວັກສອງ ເພື່ອສະຖານທູດ ຫຼື ສະຖານກົງສຸນ ແຫ່ງ ສປປ ລາວ ທີ່ຢູ່ຕ່າງປະເທດ ຕ້ອງໃຫ້ສະຖານທູດ ຫຼື ສະຖານກົງສຸນລາວ ຮັບຮູ້ນຳ ສາມາດຕິດຕາມພົນລະເມືອງລາວ ທີ່ຢູ່ຕ່າງປະເທດໄດ້.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງ ຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 171-182 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 186 ການຢ່າຮ້າງ ລະຫວ່າງ ພົນລະເມືອງລາວ ກັບ ຄົນຕ່າງປະເທດ, ຄົນຕ່າງດ້າວ ຫຼື ຄົນບໍ່ມີສັນຊາດ ຢູ່ຕ່າງປະເທດ

ການຢ່າຮ້າງ ລະຫວ່າງ ພົນລະເມືອງລາວ ກັບຄົນຕ່າງປະເທດ, ຄົນຕ່າງດ້າວ ຫຼື ຄົນບໍ່ມີສັນ ຊາດຢູ່ຕ່າງປະເທດ ອາດຈະປະຕິບັດຕາມກົດໝາຍຂອງ ສປປ ລາວ ຫຼື ກົດໝາຍຂອງປະເທດບ່ອນພວກກ່ ຽວອາໄສຢູ່ ຫຼື ກົດໝາຍຂອງປະເທດຂອງ ຜົວ ຫຼື ເມຍ.

ການຢ່າຮ້າງ ລະຫວ່າງ ພົນລະເມືອງລາວກັບ ຄົນຕ່າງປະເທດ, ຄົນຕ່າງດ້າວ ຫຼື ຄົນບໍ່ມີສັນຊາດຢູ່ຕ່າງ ປະເທດ ຕ້ອງແຈ້ງໃຫ້ສະຖານທູດ ຫຼື ສະຖານກົງສຸນລາວ ຮັບຮູ້ນຳ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນເຖິງຫຼັກການ ທີ່ຈະນຳມາໃຊ້ ໃນການຢ່າຮ້າງຂອງ ຜົວ ເມຍ ຜູ້ໃດຜູ້ໜຶ່ງທີ່ເປັນພົນລະເມືອງລາວ ກັບ ຄົນຕ່າງປະເທດ, ຄົນຕ່າງດ້າວ ຫຼື ຄົນ ບໍ່ມີສັນຊາດ ໃນເວລາທີ່ຢູ່ຕ່າງປະເທດ.
ຕົວຢ່າງ	**ກ** ຝ່າຍຍິງ ເປັນພົນລະເມືອງລາວ ແຕ່ງດອງ ກັບ **ຂ** ຄົນປະເທດ **ຄ** ຢ່າງຖືກຕ້ອງ ຕາມກົດໝາຍ ແລ້ວໄປດຳລົງຊີວິດຢູ່ປະເທດ **ງ.** ຕໍ່ມາ ທັງສອງໄດ້ຂໍຢ່າຮ້າງກັນ ຕາມກົດໝາຍຂອງ ສປປ ລາວ ຫຼື ກົດໝາຍຂອງປະເທດ **ຄ** ຫຼື ກົດໝາຍຂອງ ປະເທດ **ງ.** ພາຍຫຼັງສານຂອງ ສປປ ລາວ ຫຼື ຂອງປະເທດ **ຄ** ຫຼື ຂອງປະເທດ **ງ** ກໍໄດ້ແຈ້ງໃຫ້ສະຖານທູດ ຫຼື ສະຖານກົງສູນ ຂອງ ສປປ ລາວ ປະຈຳປະເທດ **ຄ** ຫຼື **ງ** ຮັບຮູ້ນຳ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 48 ວັກ 2 ກົດໝາຍວ່າດ້ວຍຄອບຄົວ ປີ 2008 ໂດຍເພີ່ມເນື້ອໃນ ອາດຈະປະຕິບັດຕາມກົດໝາຍຂອງ ສປປ ລາວ ຫຼື ກົດໝາຍຂອງ ປະເທດຂອງຜົວ ຫຼື ເມຍ ແລະ ເພີ່ມເຕີມ ການຢ່າງຮ້າງລະຫວ່າງ ພົນລະເມືອງ ລາວ ກັບ ຕ່າງປະເທດ, ຄົນຕ່າງດ້າວ ຫຼື ຄົນບໍ່ມີສັນຊາດ ຕ້ອງແຈ້ງໃຫ້ສະຖານທູດ ຫຼື ສະຖານກົງສຸນລາວ ຮັບຮູ້ນຳ ເພື່ອໃຫ້ຈະແຈ້ງ ແລະ ຄົບຖ້ວນກວ່າເກົ່າ.

ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 183-184 ແລະ 171 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 187 ການຈົດທະບຽນການຢ່າຮ້າງ ລະຫວ່າງ ພົນລະເມືອງລາວ ກັບ ຄົນຕ່າງດ້າວ, ຄົນຕ່າງປະເທດ ຫຼື ຄົນບໍ່ມີສັນຊາດ

ການຈົດທະບຽນການຢ່າຮ້າງ ລະຫວ່າງ ພົນລະເມືອງລາວ ກັບ ຄົນຕ່າງດ້າວ, ຄົນຕ່າງປະເທດ ຫຼື ຄົນບໍ່ມີສັນຊາດ ໃຫ້ດຳເນີນຢູ່ພະແນກພາຍໃນຂັ້ນແຂວງ ບ່ອນຄູ່ ຜົວ ເມຍ ອາໄສຢູ່ ກ່ອນການຢ່າຮ້າງ.

ສຳລັບການຈົດທະບຽນການຢ່າຮ້າງ ລະຫວ່າງ ພົນລະເມືອງລາວດ້ວຍກັນ ຫຼື ພົນລະເມືອງລາວ ກັບ ຄົນຕ່າງດ້າວ, ຄົນຕ່າງປະເທດ ຫຼື ຄົນບໍ່ມີສັນຊາດ ຢູ່ຕ່າງປະເທດ ໃຫ້ດຳເນີນຢູ່ໜ່ວຍງານທະບຽນຄອບຄົວ ສຳນັກງານຜູ້ຕາງໜ້າ ຂອງ ສປປ ລາວ ຢູ່ຕ່າງປະເທດ ຫຼື ປະຕິບັດຕາມກົດໝາຍຂອງປະເທດ ທີ່ຕົນອາໄສຢູ່.

ຈຸດປະສົງ	ເພື່ອກຳນົດຫຼັກການໃນການຈົດທະບຽນຢ່າຮ້າງ ລະຫວ່າງພົນລະເມືອງລາວ ກັບ ຄົນຕ່າງປະເທດ, ຄົນຕ່າງດ້າວ ຫຼື ຄົນບໍ່ມີສັນຊາດ.
ຕົວຢ່າງ	1. **ກ** ຝ່າຍຍິງ ເປັນພົນລະເມືອງລາວ ແຕ່ງດອງກັບ **ຂ** ຄົນຕ່າງປະເທດ ທັງສອງມີຄວາມສະໝັກໃຈຕ້ອງການຢ່າຮ້າງ ໂດຍປະກອບເອກະສານ ຍື່ນພະແນກພາຍໃນນະຄອນຫຼວງວຽງຈັນ ບ່ອນຄູ່ຜົວເມຍອາໄສຢູ່ ກ່ອນ ການຢ່າຮ້າງ. 2. **ກ** ແລະ **ຂ** ເປັນພົນລະເມືອງລາວທັງເປັນຜົວເມຍກັນ ແລະ ພາກັນໄປ ດຳລົງຊີວິດຢູ່ປະເທດ **ຄ** ມາເປັນເວລາຫຼາຍປີ.ຕໍ່ມາທັງສອງໄດ້ຂໍຢ່າຮ້າງກັນ ດ້ວຍຄວາມສະໝັກໃຈ ໃນກໍລະນີແບບນີ້ແມ່ນໃຫ້ **ກ** ແລະ **ຂ** ໄປຈົດຢູ່ ໜ່ວຍງານທະບຽນຄອບຄົວຂອງສຳນັກງານຜູ້ຕາງໜ້າ ຂອງ ສປປ ລາວ ຫຼື ປະຕິບັດຕາມກົດໝາຍຂອງປະເທດທີ່ຕົນອາໄສຢູ່.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງໃໝ່ ເພາະວ່າມາດຕາ 48 ແລະ ມາດຕາ 50 ກົດໝາຍວ່າດ້ວຍ ຄອບຄົວ ປີ 2008 ບໍ່ໄດ້ກຳນົດເນື້ອໃນລະອຽດກ່ຽວກັບ ການຈົດທະບຽນ ການຢ່າຮ້າງ ລະຫວ່າງພົນລະເມືອງລາວ ກັບ ຄົນຕ່າງປະເທດ, ຄົນຕ່າງດ້າວ ຫຼື ຄົນບໍ່ມີສັນຊາດ, ສະນັ້ນ ເພື່ອເຮັດໃຫ້ເນື້ອໃນຄົບຖ້ວນ ແລະ ຖືກຕ້ອງ ຈຶ່ງກຳນົດເປັນຫຼັກການທີ່ນຳໃຊ້ ກ່ຽວກັບບັນຫາການຈົດທະບຽນການຢ່າຮ້າງ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 183-184 ແລະ 171 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ຄ. ການເສຍຊີວິດ

ມາດຕາ 188 ການເສຍຊີວິດຂອງ ຜົວ ຫຼື ເມຍ

ການເສຍຊີວິດຂອງ ຜົວ ຫຼື ເມຍ ແມ່ນ ການເສຍຊີວິດ ໂດຍທຳມະຊາດ ຫຼື ຕາມຄຳຕັດສິນຂອງສານ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນຄວາມໝາຍຂອງການເສັຍຊີວິດຂອງ ຜົວ ຫຼື ເມຍ ແລະ ໃຫ້ສອດຄ່ອງກັບໝວດທີ 6 ຂອງປະມວນກົດໝາຍແພ່ງວ່າດ້ວຍ ການສິ້ນສຸດ ການເປັນຜົວເມຍ ຊຶ່ງການເສຍຊີວິດແມ່ນໜຶ່ງໃນສາເຫດທີ່ເຮັດໃຫ້ການເປັນ ຜົວເມຍສິ້ນສຸດລົງ.

ຕົວຢ່າງ	ກະລຸນາເບິ່ງຕົວຢ່າງໃນມາດ 189 ແລະ 190 ຂອງບົດອະທິບາຍປະມວນກົດໝາຍແພ່ງ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງໃໝ່ ຍ້ອນວ່າມາດຕາ 16 ຂໍ້ 4 ກົດໝາຍວ່າດ້ວຍຄອບຄົວ ສະບັບປີ 2008 ບໍ່ໄດ້ກຳນົດລະອຽດທາງດ້ານເນື້ອໃນ ສະນັ້ນໃນປະມວນກົດໝາຍແພ່ງ ຈຶ່ງໄດ້ກຳນົດກ່ຽວກັບ ການເສຍຊີວິດຂອງຜົວ ຫຼື ເມຍ ເປັນອັນສະເພາະ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 92, 97, 99, 100 ແລະ 170 ຂໍ້ 3, ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 189 ການເສຍຊີວິດຂອງ ຜົວ ຫຼື ເມຍ ໂດຍທຳມະຊາດ

ການເສຍຊີວິດຂອງ ຜົວ ຫຼື ເມຍ ໂດຍທຳມະຊາດ ແມ່ນ ການເສຍຊີວິດ ທີ່ເກີດຂຶ້ນຈາກພະຍາດ, ເຖົ້າແກ່, ອຸບປະຕິເຫດ, ຖືກຄາດຕະກຳ ແລະ ອື່ນໆ ທີ່ພົບເຫັນຕົວຈິງ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນຄວາມໝາຍຂອງການເສຍຊີວິດຂອງ ຜົວ ຫຼື ເມຍ ຕາມທຳມະຊາດ ແລະ ໃຫ້ສອດຄ່ອງກັບໝວດທີ 6 ຂອງປະມວນກົດໝາຍແພ່ງ ວ່າດ້ວຍການສິ້ນສຸດການເປັນຜົວເມຍ.ຊຶ່ງການເສຍຊີວິດແມ່ນໜຶ່ງໃນສາເຫດທີ່ເຮັດໃຫ້ການເປັນຜົວເມຍສິ້ນສຸດລົງ.
ຕົວຢ່າງ	**ກ** ແລະ **ຂ** ເປັນຜົວເມຍກັນມາໄດ້ຫຼາຍປີ, ຕໍ່ມາ **ຂ** ໄດ້ເສຍຊີວິດຍ້ອນເສັ້ນເລືອດໃນສະໝອງແຕກໂດຍໄດ້ຮັບການຢັ້ງຢືນການເສຍຊີວິດຈາກແພດ. ກໍລະນີນີ້ແມ່ນການເສຍຊີວິດຕາມທຳມະຊາດ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງໃໝ່ ຍ້ອນວ່າມາດຕາ 16 ຂໍ້ 4 ຂອງກົດໝາຍວ່າດ້ວຍຄອບຄົວ ສະບັບປີ 2008 ບໍ່ໄດ້ກຳນົດລະອຽດທາງດ້ານເນື້ອໃນ, ສະນັ້ນໃນປະມວນກົດໝາຍແພ່ງ ຈຶ່ງໄດ້ກຳນົດກ່ຽວກັບ ການເສຍຊີວິດຂອງ ຜົວ ຫຼື ເມຍ ຕາມທຳມະຊາດ ເປັນອັນສະເພາະ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 170 ຂໍ້ 3 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 190 ການເສຍຊີວິດຂອງ ຜົວ ຫຼື ເມຍ ຕາມຄຳຕັດສິນຂອງສານ

ການເສຍຊີວິດຂອງ ຜົວ ຫຼື ເມຍ ຕາມຄຳຕັດສິນຂອງສານ ແມ່ນການເສຍຊີວິດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 97 ຂອງປະມວນກົດໝາຍສະບັບນີ້.

ຈຸດປະສົງ	ເພື່ອໃຫ້ຮູ້ວ່າການເສຍຊີວິດຂອງຜົວ ຫຼື ເມຍຕາມຄຳຕັດສິນຂອງສານ ນັ້ນມີເງື່ອນໄຂ ແລະ ກຳນົດເວລາທີ່ແຕກຕ່າງກັນຕາມແຕ່ລະກໍລະນີ ອັນເປັນສາເຫດໃຫ້ສາຍພົວພັນຜົວເມຍສິ້ນສຸດລົງ.
ຕົວຢ່າງ	**ກ** ໄດ້ເດີນທາງໄປຕ່າງແຂວງ ເພື່ອໄປເຮັດວຽກ ແລະໄດ້ຕິດຕໍ່ ສົ່ງຂ່າວຫາຄອບຄົວ, ແຕ່ມາຮອດວັນທີ 6 ກຸມພາ 2016 ບໍ່ສາມາດຕິດຕໍ່ຫາ **ກ** ໄດ້ ແລະ ໄດ້ຮັບຂ່າວຫາຍສາບສູນໄປ ໂດຍບໍ່ຮູ້ຂ່າວຄາວຈາກສະຖານທີ່ເຮັດວຽກ. ຕໍ່ມາ **ຂ** ຜູ້ເປັນເມຍຈຶ່ງໄດ້ປະກອບເອກະສານຍື່ນຫາສານປະຊາຊົນຕັດສິນໃຫ້;ໃນວັນທີ 5 ມີນາ 2019 ສານຈຶ່ງໄດ້ຕັດສິນປະກາດເປັນຜູ້ເສຍຊີວິດຕາມກົດໝາຍ.

ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງຂຶ້ນໃໝ່ ເພື່ອອະທິບາຍການເສຍຊີວິດຂອງ ຜົວ ເມຍ ແມ່ນຕາມທີ່ກຳນົດໄວ້ ໃນຂໍ້ 3 ມາດຕາ 170 ຂອງປະມວນກົດໝາຍແພ່ງໃຫ້ຄົບຖ້ວນ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 21 ແລະ 22 ຂອງກົດໝາຍວ່າດ້ວຍທະບຽນຄອບຄົວ ປີ 2018; ມາດຕາ 97 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ງ. ຜົນຂອງການສິ້ນສຸດສາຍພົວພັນ ຜົວ ເມຍ ແລະ ການເອົາກັນຄືນເປັນ ຜົວ ເມຍ

ມາດຕາ 191 ຜົນຂອງການສິ້ນສຸດສາຍພົວພັນ ຜົວ ເມຍ

ຜົນຂອງການສິ້ນສຸດສາຍພົວພັນ ຜົວ ເມຍ ມີ ດັ່ງນີ້:

1. ສິນສົມສ້າງຈະໄດ້ຮັບການແບ່ງປັນ;
2. ມີພັນທະໃນການລ້ຽງດູລູກທີ່ບໍ່ພົ້ນກະສຽນອາຍຸ;
3. ຮັບຜິດຊອບຮ່ວມກັນຕໍ່ໜີ້ສິນ ທີ່ມີໃນເວລາເປັນ ຜົວ ເມຍ ກັນ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ ພັນທະຂອງ ຜົວ ເມຍ ກ່ຽວກັບສິນສົມສ້າງ, ການລ້ຽງດູລູກທີ່ຍັງບໍ່ທັນເຖິງກະສຽນອາຍຸ ແລະ ໜີ້ສິນຕໍ່ບຸກຄົນທີສາມ ໃນເວລາທີ່ສາຍພົວພັນ ຜົວ ເມຍ ສິ້ນສຸດລົງ ເນື່ອງຈາກການຢ່າຮ້າງ.
ຕົວຢ່າງ	**ກ** ແລະ **ຂ** ເປັນ ຜົວ ເມຍ ກັນ ແຕ່ງດອງກັນໃນປີ 2009, ປີ2018 ທັງສອງມີລູກ ສອງຄົນຄື: **ຄ** ມີອາຍຸ 18 ປີ ແລະ **ງ** ມີອາຍຸ 5 ປີ, **ກ** ແລະ **ຂ** ມີເງິນ 100.000.000 ກີບ ແລະ ມີໜີ້ສິນ 20.000.000 ກີບ. ປີ 2019 **ກ** ແລະ **ຂ** ໄດ້ຢ່າຮ້າງກັນ. ສະນັ້ນ, ເງິນ 100.000.000 ກີບ ຕ້ອງເອົາມາແບ່ງກັນ ຜູ້ລະ 50.000.000 ກີບ, ສ່ວນລູກນັ້ນແມ່ນຢູ່ນຳ **ກ** ຫຼື **ຂ** ກໍໄດ້. ໜີ້ສິນ 20.000.000 ກີບ ນັ້ນ **ກ** ແລະ **ຂ** ຮັບຜິດຊອບຄົນລະ10.000.000 ກີບ. **ກ** ແລະ **ຂ** ຍັງມີພັນທະໃນການເບິ່ງແຍງ, ສຶກສາອົບຮົມ ແລະ ປົກປ້ອງສິດ ແລະ ຜົນປະໂຫຍດຂອງ **ຄ** ແລະ **ງ**.
ເຫດຜົນໃນການສ້າງໃໝ່	ມາດຕານີ້ເປັນມາດຕາສ້າງຂຶ້ນໃໝ່ ເພື່ອໃຫ້ເຫັນຜົນຂອງການສິ້ນສຸດສາຍພົວພັນ ຜົວ ເມຍ ແລະ ໃຫ້ມີຄວາມສະດວກ ໃນການປະຕິບັດຫຼັກການຕົວຈິງ ສອດຄ່ອງກັບສະພາບຕົວຈິງຂອງສັງຄົມ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 768 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ (ການແບ່ງປັນສິນສົມສ້າງ)
ມາດຕາອ້າງອີງ	ມາດຕາ 165,168,170,179,215,216 ແລະ 217 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 192 ການສິ້ນສຸດການໃຊ້ນາມສະກຸນດຽວກັນ

ຜົວ ຫຼື ເມຍ ທີ່ແຕ່ງດອງກັນ ຫາກໄດ້ປ່ຽນນາມສະກຸນມາໃສ່ນາມສະກຸນຂອງ ຜົວ ຫຼື ເມຍ ນັ້ນ ພາຍຫຼັງສິ້ນສຸດສາຍ ຜົວ ເມຍ ດ້ວຍການຢ່າຮ້າງ ຫຼື ການແຕ່ງດອງເປັນໂມຄະ ຕາມຄຳຕັດສິນຂອງສານແລ້ວ ກໍສາມາດໃສ່ນາມສະກຸນເດີມຂອງຕົນຄືນໄດ້ ຫຼື ຈະຮັກສານາມສະກຸນຂອງຄອບຄົວໄວ້ກໍໄດ້ ຖ້າຫາກບໍ່ມີການຄັດຄ້ານຂອງອີກຝ່າຍໜຶ່ງ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ວ່າຄູ່ ຜົວ ເມຍ ທີ່ໃຊ້ນາມສະກຸນດຽວກັນ ພາຍຫຼັງສິ້ນສຸດການເປັນຜົວເມຍແລ້ວ ຜົວ ຫຼື ເມຍ ຍັງສາມາດໃສ່ນາມສະກຸນທີ່ຍັງເປັນ ຜົວ ເມຍ ຫຼື ຈະໃສ່ນາມສະກຸນກ່ອນການເປັນ ຜົວ ເມຍກັນ.
ຕົວຢ່າງ	**1. ก** ດຳແດງ ແລະ **ข** ຂາວຟ້າ ທັງສອງເປັນຜົວເມຍກັນ ຕໍ່ມາ **ข** ຂາວຟ້າ ໄດ້ປ່ຽນນາມສະກຸນມາເປັນ **ข** ດຳແດງ. ຕໍ່ມາ **ก** ແລະ **ข** ໄດ້ມີການຢ່າຮ້າງກັນຕາມຄຳຕັດສິນຂອງສານ, ພາຍຫຼັງທີ່ມີຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດແລ້ວ **ข** ດຳແດງ ໄດ້ຂຽນຄຳຮ້ອງຂໍຕໍ່ສານ ເພື່ອໃຫ້ສານມີຄຳຕັດສິນກ່ຽວກັບການປ່ຽນນາມສະກຸນຈາກ **ข** ດຳແດງມາເປັນ **ข** ຂາວຟ້າ. **2. ก** ດຳແດງ ແລະ **ข** ຂາວຟ້າ ທັງສອງເປັນ ຜົວ ເມຍ ກັນຕໍ່ມາ **ข** ຂາວຟ້າ ໄດ້ປ່ຽນນາມສະກຸນມາເປັນ **ข** ດຳແດງນຳ **ก.** ຕໍ່ມາ **ก** ແລະ **ข** ໄດ້ມີການຢ່າຮ້າງກັນດ້ວຍຄວາມສະໝັກໃຈ, ສະນັ້ນ **ข** ດຳແດງ ໄດ້ຂຽນຄຳຮ້ອງສະເໜີຫ້ອງການພາຍໃນບ່ອນທີ່ຕົນອາໃສຢູ່ເພື່ອຂໍປ່ຽນນາມສະກຸນ ຈາກ **ข** ດຳແດງ ມາເປັນ **ข** ຂາວຟ້າຄືນ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງຂຶ້ນໃໝ່ ເພື່ອກຳນົດໃຫ້ຊັດເຈນ ກ່ຽວກັບຂໍ້ກຳນົດໃນການຈັດຕັ້ງປະຕິບັດການໃຊ້ນາມສະກຸນ ພາຍຫຼັງການຢ່າຮ້າງເພາະວ່າກົດໝາຍຄອບຄົວ ປີ 2008 ບໍ່ໄດ້ກຳນົດໄວ້.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 767 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 163, 174 ແລະ 177 ຂອງປະມວນກົດໝາຍແພ່ງ; ມາດຕາ 18 ຂອງກົດໝາຍວ່າດ້ວຍ ທະບຽນຄອບຄົວ ປີ 2018.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 193 ການເອົາກັນຄືນເປັນ ຜົວ ເມຍ

ຜົວ ເມຍ ທີ່ໄດ້ຢ່າຮ້າງກັນແລ້ວ ຈະເອົາກັນຄືນອີກ ກໍຕ້ອງຈົດທະບຽນການແຕ່ງດອງຄືນໃໝ່ ແລະ ໃຫ້ປະຕິບັດຕາມປະມວນກົດໝາຍສະບັບນີ້.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ວ່າ ຜົວ ເມຍ ທີ່ໄດ້ຢ່າຮ້າງກັນແລ້ວ ແຕ່ມີຄວາມຕ້ອງການເອົາກັນຄືນນັ້ນ ຕ້ອງປະຕິບັດຕາມຫຼັກການ ຂອງກົດໝາຍທີ່ກ່ຽວຂ້ອງ.
ຕົວຢ່າງ	**ก** ແລະ **ข** ໄດ້ຈົດທະບຽນແຕ່ງດອງ ເປັນ ຜົວ ເມຍ ກັນໃນປີ 2014, ມາຮອດປີ 2018 ທັງສອງໄດ້ມີການຢ່າຮ້າງກັນ. ຕໍ່ມາປີ 2020 **ก** ແລະ **ข** ກັບຄືນມາເອົາເປັນຜົວ ເມຍ ຄືນໃໝ່, ດັ່ງນັ້ນ **ก** ແລະ **ข** ຕ້ອງໄດ້ໄປຈົດທະບຽນແຕ່ງດອງເປັນ ຜົວ ເມຍ ກັນຄືນໃໝ່.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 25 ຂອງກົດໝາຍວ່າດ້ວຍຄອບຄົວ ປີ 2008 ໂດຍໄດ້ເພີ່ມຄຳເວົ້າ ແລະ ໃຫ້ປະຕິບັດຕາມປະມວນກົດໝາຍແພ່ງ ຕາມຂັ້ນຕອນຂອງການແຕ່ງດອງ ແລະ ການຢ່າຮ້າງ ຊຶ່ງໄດ້ກຳນົດ ໃນປະມວນກົດໝາຍແພ່ງ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 152 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ໝວດທີ 7
ສາຍພົວພັນ ພໍ່ ແມ່ ແລະ ລູກ
ກ. ລູກຄິງ

ມາດຕາ 194 ການໄດ້ສິດ ແລະ ພັນທະຂອງພໍ່ແມ່ ແລະ ລູກຄິງ

ສິດ ແລະ ພັນທະຂອງພໍ່ແມ່ ແລະ ລູກ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ເກີດຂຶ້ນບົນພື້ນຖານການກຳເນີດຂອງເດັກ.

ເດັກ ທີ່ເກີດຈາກພໍ່ແມ່ ທີ່ແຕ່ງດອງນຳກັນຢ່າງຖືກຕ້ອງ ຫຼື ເກີດຈາກພໍ່ແມ່ ທີ່ບໍ່ໄດ້ແຕ່ງດອງນຳກັນ ແຕ່ຜູ້ເປັນພໍ່ ໄດ້ສະໝັກໃຈຮັບຮູ້ດ້ວຍຕົນເອງວ່າເປັນພໍ່ຂອງເດັກນັ້ນ ຫຼື ຜູ້ເປັນພໍ່ໄດ້ຖືກຮັບຮູ້ຕາມຄຳຕັດສິນຂອງສານ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ວ່າ ສາເຫດທີ່ພາໃຫ້ເກີດສິດແລະພັນທະ ຂອງເດັກບົນພື້ນຖານ ສາຍພົວພັນພໍ່ແມ່ຕາມກົດໝາຍ, ພ້ອມທັງກຳນົດໃຫ້ເຫັນສາຍພົວພັນພໍ່ລູກ ໃນ ກໍລະນີທີ່ມີຄວາມຫຍຸ້ງຍາກ ໃນການກຳນົດຜູ້ເປັນພໍ່ໂດຍອີງໃສ່ປັດໃຈພາຍນອກ, ສ່ວນສາຍພົວພັນແມ່ລູກ ສາມາດຮູ້ໄດ້ຈະແຈ້ງແລ້ວໃນເວລາເດັກເກີດ.
ຕົວຢ່າງ	1. ປີ 2018 **ກ** ແລະ **ຂ** ຈົດທະບຽນການແຕ່ງດອງນຳກັນເປັນ ຜົວ ເມຍ, ຕໍ່ມາ ທັງສອງມີລູກຄົນໜຶ່ງ **ຄ.** ສາຍພົວພັນທາງດ້ານກົດໝາຍ ລະຫວ່າງ ພໍ່ ແມ່ ແລະ ລູກ ໄດ້ເກີດຂຶ້ນ ນັບແຕ່ມື້ທີ່ໄດ້ໃຫ້ກຳເນີດ **ຄ** ເປັນຕົ້ນໄປ. 2. **ກ** ແລະ **ຂ** ມັກຮັກກັນມາດົນພໍສົມຄວນ ແຕ່ຍັງບໍ່ທັນໄດ້ຈົດທະບຽນການ ແຕ່ງດອງຢ່າງຖືກຕ້ອງ. ຕໍ່ມາ **ຂ** ໄດ້ຖືພາ ແລະ ເກີດ **ຄ, ກ** ໄດ້ຮັບຮູ້ວ່າ **ຄ** ເປັນລູກຂອງຕົນ ຕາມມາດຕາ 197 ວັກ 2 ຂອງປະມວນກົດ ໝາຍແພ່ງ ໃນກໍລະນີ **ກ** ໄດ້ປະຕິເສດ ບໍ່ຮັບຮູ້ວ່າ **ຄ** ເປັນລູກຂອງຕົນ, **ຂ** ຈຶ່ງຮ້ອງ ຟ້ອງຕໍ່ສານ ແລະ ສານໄດ້ລົງຄຳ ຕັດສິນວ່າ **ຄ** ເປັນລູກ **ກ** ແລະ ໃຫ້ **ກ** ຮັບຜິດຊອບລ້ຽງດູ **ຄ** ຈົນຮອດ ສິບແປດປີ ຊຶ່ງສາຍພົວພັນທາງດ້ານກົດໝາຍ ລະຫວ່າງ ພໍ່ ແລະ ລູກ ໄດ້ເກີດຂຶ້ນນັບ ແຕ່ມື້ທີ່ໄດ້ໃຫ້ກຳເນີດ **ຄ** ເປັນຕົ້ນໄປ.
ເຫດຜົນໃນການປັບປຸງ	ມາດຕານີ້ໄດ້ປັບປຸງມາຈາກ ມາດຕາ 29 ຂອງກົດໝາຍວ່າດ້ວຍຄອບຄົວ ປີ 2008 ໂດຍໄດ້ຈັດລຽງຄຳສັບຄືນໃໝ່ ເພື່ອໃຫ້ຮັດກຸມ ແລະ ຊັດເຈນຂຶ້ນ.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງ ຂອງປະເທດອື່ນ	ມາດຕາ 772 ແລະ 779 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 149 ແລະ 197 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 195 ການແຈ້ງເກີດ ແລະ ຈົດທະບຽນການເກີດ

ເມື່ອມີເດັກເກີດຢູ່ໃນຄອບຄົວຂອງຕົນ, ສຸກສາລາ ຫຼື ໂຮງໝໍ, ຫົວໜ້າຄອບຄົວ ຫຼື ຜູ້ຕາງໜ້າຄອບຄົວ ຕ້ອງແຈ້ງເກີດ ແລະ ຈົດທະບຽນການເກີດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍທະບຽນຄອບຄົວ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ ຂັ້ນຕອນ ຂອງການດຳເນີນໃນການຈົດທະບຽນການເກີດ.
ຕົວຢ່າງ	1. **ກ** ແລະ **ຂ** ເປັນ ຜົວ ເມຍ ກັນ ຕໍ່ມາ **ຂ** ໄດ້ເກີດ **ຄ,** ດັ່ງນັ້ນ **ກ** ຕ້ອງນຳເອົາ ເອກະສານການເກີດເພື່ອໄປແຈ້ງເກີດຢູ່ຫ້ອງການບ້ານ ບ່ອນທີ່ **ກ** ແລະ **ຂ** ອາໄສຢູ່ແລ້ວ **ກ** ຕ້ອງນຳເອົາເອກະສານດັ່ງກ່າວ ໄປຈົດທະບຽນການເກີດຢູ່ ຫ້ອງການພາຍໃນເມືອງ ຕື່ມອີກ. 2. **ກ** ແລະ **ຂ** ເປັນຜົວເມຍກັນ ແລ້ວໄດ້ໄປເຮັດວຽກຢູ່ ຕ່າງປະເທດ ແລະ ໄດ້ໃຫ້ກຳເນີດ **ຄ** ຢູ່ຕ່າງປະເທດ ແລ້ວ **ກ** ຈຶ່ງໄປແຈ້ງຕໍ່ໜ່ວຍງານທະບຽນ ຄອບຄົວຢູ່ສຳນັກງານຜູ້ຕາງໜ້າຂອງ ສປປ ລາວ ຢູ່ຕ່າງປະເທດ ທີ່ **ກ** ແລະ **ຂ** ອາໄສຢູ່ນັ້ນ.

ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງຈາກ ມາດຕາ 17,18 ຂອງກົດໝາຍວ່າດ້ວຍທະບຽນຄອບຄົວ ປີ 2009 ໃຫ້ມີຄວາມໝາຍຊັດເຈນຂຶ້ນ ກ່ຽວກັບຂັ້ນຕອນການຈົດທະບຽນການເກີດ ເພື່ອໃຫ້ສອດຄ່ອງກັບ ມາດຕາ 14, 15 ຂອງກົດໝາຍວ່າດ້ວຍທະບຽນຄອບຄົວ ປີ 2018.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 49 ຂອງກົດໝາຍທະບຽນຄອບຄົວ ຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 14 ແລະ 15 ຂອງກົດໝາຍວ່າດ້ວຍທະບຽນຄອບຄົວ ປີ 2018.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 196 ຊື່ ແລະ ນາມສະກຸນຂອງເດັກ

ພໍ່ແມ່ ເປັນຜູ້ເລືອກຊື່ຂອງເດັກຕາມໃຈມັກ ແລະ ຕາມການເຫັນດີນຳກັນ. ຜູ້ເປັນລູກມີສິດປ່ຽນຊື່ຂອງຕົນ ຕາມລະບຽບການ ຖ້າຕົນຫາກພົ້ນກະສຽນອາຍຸແລ້ວ.

ນາມສະກຸນຂອງເດັກ ໃຫ້ໃສ່ຕາມນາມສະກຸນຂອງພໍ່ແມ່ ຖ້າພໍ່ແມ່ ໃສ່ນາມສະກຸນດຽວກັນ.

ຖ້າພໍ່ແມ່ ໃສ່ນາມສະກຸນຕ່າງກັນ ເດັກອາດໃສ່ນາມສະກຸນຂອງພໍ່ ຫຼື ຂອງແມ່ ຫຼື ຂອງທັງສອງ ກໍໄດ້ ຕາມການເຫັນດີຂອງພໍ່ແມ່. ຖ້າຫາກຕົກລົງກັນບໍ່ໄດ້ແລ້ວ ເດັກຈະໃສ່ນາມສະກຸນ ຕາມຄຳຕັດສິນຂອງສານ.

ເມື່ອມີການຢ່າຮ້າງ ຫຼື ຮັບຮູ້ການແຕ່ງດອງເປັນໂມຄະ ຕາມຄຳຕັດສິນຂອງສານແລ້ວ ນາມສະກຸນຂອງລູກ ຈະບໍ່ມີການປ່ຽນແປງ. ຖ້າ ພໍ່ ຫຼື ແມ່ ທີ່ລູກຢູ່ນຳ ຫາກຕ້ອງການໃຫ້ລູກໃສ່ນາມສະກຸນຂອງຕົນ ກໍມີສິດໃຫ້ລູກທີ່ຍັງບໍ່ທັນພົ້ນກະສຽນອາຍຸນັ້ນ ປ່ຽນມາໃສ່ນາມສະກຸນນຳຕົນກໍໄດ້.

ໃນກໍລະນີທີ່ຕ້ອງການປ່ຽນຊື່ ຫຼື ນາມສະກຸນນັ້ນ ໃຫ້ປະຕິບັດຕາມກົດໝາຍທີ່ກ່ຽວຂ້ອງ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນກ່ຽວກັບ ສິດຂອງພໍ່ແມ່ ແລະ ລູກ ໃນການໃສ່ຊື່ ແລະ ນາມສະກຸນຂອງລູກ ພ້ອມທັງການດຳເນີນການປ່ຽນຊື່ ແລະ ນາມສະກຸນຂອງລູກ.
ຕົວຢ່າງ	**1.** **ກ** ແລະ **ຂ** ໄດ້ແຕ່ງດອງກັນ ແລ້ວມີລູກສອງຄົນ ຊຶ່ງ **ກ** ແລະ **ຂ** ຜູ້ເປັນ ພໍ່ ແມ່ ສາມາດເລືອກໃຫ້ລູກ ໃຊ້ນາມສະກຸນຂອງ ພໍ່ ຫຼື ນາມສະກຸນຂອງແມ່ກໍໄດ້. **2.** **ກ** (ພໍ່) ແລະ **ຂ** (ແມ່) ທັງສອງມີລູກໜຶ່ງຄົນ ຄື **ຄ** (ລູກ), ພໍ່ ແມ່ ໄດ້ຕົກລົງ ໃຫ້ **ຄ** ໃສ່ຕາມນາມສະກຸນຂອງ **ກ** (ພໍ່). ຕໍ່ມາ **ກ** ແລະ **ຂ** ໄດ້ມີການ ຢ່າຮ້າງກັນ **ຄ** ໄດ້ໄປຢູ່ນຳ **ຂ** ຜູ້ເປັນ ແມ່, ເມື່ອ **ຄ** ບັນລຸນິຕິພາວະ ຮອດ 18 ປີ **ຄ** ຜູ້ເປັນລູກສາມາດທີ່ຈະປ່ຽນ ຫຼື ເລືອກມາໃຊ້ນາມສະກຸນໄປຕາມແມ່ ກໍໄດ້, ແຕ່ຕ້ອງໄດ້ຂຽນຄຳຮ້ອງຂໍ ໄປຍັງຫ້ອງທະບຽນຄອບຄົວເມືອງ ທີ່ **ກ** ແລະ **ຂ** ຢູ່. **3.** **ກ** ມີລູກຊື່ວ່າ **ຄ** ແລະ **ຄ** ໄດ້ໄປຢູ່ນຳແມ່ ເນື່ອງຈາກພໍ່ແມ່ ໄດ້ຢ່າຮ້າງກັນ, ຊຶ່ງ ແມ່ກໍໄດ້ປ່ຽນນາມສະກຸນກັບໄປໃສ່ນາມສະກຸນເດີມ ພາຍຫຼັງໄດ້ຢ່າຮ້າງ ກັບ ຜົວ, ດັ່ງນັ້ນ **ຄ** ຜູ້ເປັນລູກກໍສາມາດສະເໜີປ່ຽນນາມສະກຸນມາໃສ່ນຳ ແມ່ກໍໄດ້.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 31 ຂອງກົດໝາຍວ່າດ້ວຍຄອບຄົວ ປີ 2008 ໂດຍໄດ້ປັບປຸງ ຊື່ມາດຕາຈາກ ຊື່, ນາມສະກຸນ ແລະ ສັນຊາດຂອງເດັກ ມາເປັນ ຊື່ ແລະ ນາມສະກຸນຂອງເດັກ. ນອກນັ້ນ, ມາດຕານີ້ ບໍ່ໄດ້ນຳເອົາເນື້ອໃນຂອງ ວັກ 5, 6 ຂອງມາດຕາ 31 ມາ ເນື່ອງຈາກວ່າ ຂໍ້ກຳນົດກ່ຽວກັບສັນຊາດຂອງເດັກນັ້ນ ແມ່ນໄດ້ກຳນົດໄວ້ໃນ ມາດຕາ 13-15 ຂອງກົດໝາຍວ່າດ້ວຍສັນຊາດ ປີ 2017 ແລະ ມາດຕານີ້ບໍ່ໄດ້ ນຳເອົາເນື້ອໃນຂອງ ວັກ 7 ມາດຕາ 31 ເພາະວ່າໄດ້ກຳນົດກ່ຽວກັບ ມາດຕາ 18 ຂອງກົດໝາຍວ່າດ້ວຍ ທະບຽນຄອບຄົວ ປີ 2018.

ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 226 ວັກ 1 ຂອງກົດໝາຍວ່າດ້ວຍຂັ້ນຕອນການດຳເນີນຄະດີກ່ຽວກັບການພົວພັນພາຍໃນປະເທດຍີ່ປຸ່ນ ຕາຕະລາງຊ້ອນທ້າຍ 1/122; ມາດຕາ 790 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 18 ຂອງກົດໝາຍວ່າດ້ວຍທະບຽນຄອບຄົວ ປີ 2018.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 197 ການຮັບຮູ້ການເປັນພໍ່

ການຮັບຮູ້ການເປັນພໍ່ ຈະເຮັດຂຶ້ນໄດ້ໃນກໍລະນີ ທີ່ລູກຫາກເກີດຈາກ ພໍ່ ແມ່ ທີ່ບໍ່ໄດ້ແຕ່ງດອງນຳກັນ.

ເມື່ອມີການຮັບຮູ້ການເປັນພໍ່ ສາຍພົວພັນພໍ່ລູກ ເກີດຂຶ້ນ ນັບແຕ່ເວລາເດັກເກີດ.

ການຮັບຮູ້ການເປັນພໍ່ ດ້ວຍຄວາມສະໝັກໃຈ ຕ້ອງໃຫ້ ພໍ່ ແມ່ ຂອງເດັກ ຍື່ນຄຳຮ້ອງຮ່ວມກັນຕໍ່ອົງການທະບຽນຄອບຄົວ ເມືອງ, ເທດສະບານ, ນະຄອນ ຊຶ່ງໃນຄຳຮ້ອງນັ້ນ ພໍ່ຂອງເດັກໄດ້ຮັບຮູ້ວ່າຕົນເປັນພໍ່ ແລະ ແມ່ ກໍເຫັນດີນຳຄຳຮ້ອງນັ້ນ. ຖ້າແມ່ຫາກເສຍຊີວິດແລ້ວ ການຮັບຮູ້ການເປັນພໍ່ນັ້ນ ຈະເຮັດຄຳຮ້ອງແຕ່ຝ່າຍດຽວກໍໄດ້.

ໃນກໍລະນີ ທີ່ເດັກຫາກພົ້ນກະສຽນອາຍຸແລ້ວ ການຮັບຮູ້ການເປັນພໍ່ ຈະເຮັດຂຶ້ນໄດ້ ກໍຕໍ່ເມື່ອຫາກມີຄວາມເຫັນດີຂອງເດັກເທົ່ານັ້ນ. ການທີ່ພໍ່ຂອງເດັກ ໄດ້ແຕ່ງດອງກັບຜູ້ຍິງອື່ນແລ້ວນັ້ນ ບໍ່ໃຫ້ເປັນອຸປະສັກຕໍ່ການຮັບຮູ້ການເປັນພໍ່ ແຕ່ຢ່າງໃດ.

ເມື່ອຜູ້ເປັນພໍ່ ຫາກບໍ່ຮັບຮູ້ວ່າ ຕົນເປັນພໍ່ຂອງເດັກແລ້ວ, ຜູ້ເປັນແມ່, ຜູ້ປົກຄອງເດັກ ຫຼື ເດັກທີ່ພົ້ນກະສຽນອາຍຸແລ້ວ ກໍມີສິດເຮັດຄຳຮ້ອງເຊັ່ນດຽວກັນ ເພື່ອໃຫ້ສານພິຈາລະນາຕັດສິນໃຫ້ຮັບຮູ້ການເປັນພໍ່.

ສານຈະຕັດສິນ ໃຫ້ມີການຮັບຮູ້ການເປັນພໍ່ໄດ້ ກໍຕໍ່ເມື່ອຫາກມີກໍລະນີ ດັ່ງນີ້:

1. ການຢູ່ຮ່ວມກັນ ແລະ ການສ້າງເສດຖະກິດລວມ ລະຫວ່າງ ແມ່ຂອງເດັກ ກັບຜູ້ຈະຮັບຮູ້ການເປັນພໍ່ ກ່ອນເດັກເກີດ;
2. ການເອົາໃຈໃສ່ເບິ່ງແຍງລ້ຽງດູລູກ ຫຼື ການສຶກສາອົບຮົມລູກຮ່ວມກັນ;
3. ການມີຫຼັກຖານຢັ້ງຢືນວ່າຜູ້ກ່ຽວເປັນພໍ່ ເຊັ່ນ ຫຼັກຖານທາງດ້ານວິທະຍາສາດການແພດ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ກ່ຽວກັບວິທີການກຳນົດສາຍພົວພັນພໍ່ລູກມີທີຮັບຮູ້ດ້ວຍຄວາມສະໝັກໃຈ ແລະ ຮັບຮູ້ຕາມການຕັດສິນຂອງສານ, ຂັ້ນຕອນການດຳເນີນການຮັບຮູ້ດ້ວຍຄວາມສະໝັກໃຈ, ຂັ້ນຕອນການດຳເນີນການຮັບຮູ້ຕາມການຕັດສິນຂອງສານ ແລະ ເງື່ອນໄຂໃນການຮັບຮູ້ການເປັນພໍ່ໃນກໍລະນີທີ່ເດັກຫາກພົ້ນກະສຽນອາຍຸແລ້ວ.
ຕົວຢ່າງ	**1. ກ** ແລະ **ຂ** ມັກຮັກກັນມາດົນພໍສົມຄວນ ແຕ່ຍັງບໍ່ທັນໄດ້ຈົດທະບຽນການແຕ່ງດອງຢ່າງຖືກຕ້ອງ, ຕໍ່ມາ **ຂ** ໄດ້ຖືພາ ແລະ ເກີດ **ຄ**, **ກ** ໄດ້ຮັບຮູ້ວ່າ **ຄ** ເປັນລູກຂອງຕົນ. ສາຍພົວພັນ ລະຫວ່າງ ພໍ່ລູກ ເກີດຂຶ້ນນັບແຕ່ມື້ **ຄ** ເກີດ. ພາຍຫຼັງທີ່ **ຄ** ເກີດຂຶ້ນ **ກ** ແລະ **ຂ** ຕ້ອງໄດ້ຍື່ນຄຳຮ້ອງຮ່ວມກັນຕໍ່ອົງການທະບຽນຄອບຄົວ ຊຶ່ງໃນຄຳຮ້ອງນັ້ນ ຕ້ອງໄດ້ຂຽນວ່າ **ກ** ຮັບຮູ້ວ່າ ຕົນເປັນພໍ່ ຂອງ **ຄ** ແລະ **ຂ** ເຫັນດີນຳຄຳຮ້ອງນັ້ນ. ຖ້າ **ຂ** ເສຍຊີວິດ **ກ** ຈະເຮັດຄຳຮ້ອງແຕ່ຝ່າຍດຽວກໍໄດ້. ເມື່ອ **ຄ** ມີອາຍຸ ສິບແປດປີແລ້ວ, ການຮັບຮູ້ຂອງ **ກ** ສາມາດເຮັດຂຶ້ນໄດ້ກໍຕໍ່ເມື່ອ **ຄ** ເຫັນດີນຳ. ເຖິງວ່າ **ກ** ຈະໄດ້ແຕ່ງດອງກັບຄົນອື່ນແລ້ວກໍຕາມ. **2. ກ** ຜູ້ເປັນພໍ່ໄດ້ປະຕິເສດບໍ່ຮັບຮູ້ວ່າ **ຄ** ເປັນລູກ **ຄ** ເມື່ອມີອາຍຸສິບແປດປີແລ້ວ **ຄ** ມີສິດຍື່ນຄຳຮ້ອງຕໍ່ສານ ເພື່ອໃຫ້ສານຕັດສິນຮັບຮູ້ວ່າ **ກ** ເປັນພໍ່. ຊຶ່ງສານຈະພິຈາລະນາຕັດສິນຮັບຮູ້ການເປັນພໍ່ໄດ້ ກໍລະນີດັ່ງນີ້: - **ກ** ໄດ້ຢູ່ຮ່ວມກັບ **ຂ** ແລະ ໄດ້ສ້າງເສດຖະກິດຮ່ວມກັນກ່ອນ **ຄ** ເກີດ; - **ກ** ແລະ **ຂ** ໄດ້ເອົາໃຈໃສ່ເບິ່ງແຍງ ລ້ຽງດູ ຫຼື ສຶກສາອົບຮົມ **ຄ** ຮ່ວມກັນ; - ມີຫຼັກຖານຢັ້ງຢືນທາງວິທະຍາສາດການແພດວ່າ **ກ** ເປັນພໍ່ ເຊັ່ນ ການຢັ້ງຢືນຜົນພິສູດຈາກແພດ.

ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກເນື້ອໃນຂອງມາດຕາ 30 ຂອງກົດໝາຍວ່າດ້ວຍຄອບຄົວ ປີ2008 ຊຶ່ງໄດ້ເພີ່ມເຕີມ ຜົນສະທ້ອນຂອງການຮັບຮູ້ການເປັນພໍ່ນັບແຕ່ເວລາທີ່ເດັກເກີດ ແລະ ໄດ້ກຳນົດໃຫ້ລູກທີ່ພົ້ນກະສຽນອາຍຸ ມີສິດຮ້ອງຂໍການຮັບຮູ້ການເປັນພໍ່ ເພື່ອໃຫ້ຮັດກຸມ ແລະ ຊັດເຈນຂຶ້ນ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 779,781,782,783,784 ແລະ 787ຂອງປະມວນກົດໝາຍແພ່ງຍີ່ປຸ່ນ; ມາດຕາ 89 ວັກ 1 ແລະ 91 ຂອງກົດໝາຍແຕ່ງດອງ ແລະ ຄອບຄົວ ຫວຽດນາມ 2015.
ມາດຕາອ້າງອີງ	ມາດຕາ 194 ແລະ 198 ຂອງປະມວນກົດໝາຍແພ່ງ; ມາດຕາ 30 ຂອງກົດໝາຍວ່າດ້ວຍທະບຽນຄອບຄົວ ປີ 2018.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 198 ການປະຕິເສດການເປັນພໍ່

ເມື່ອຜູ້ເປັນຜົວ ຫາກສາມາດພິສູດໄດ້ວ່າເດັກ ບໍ່ແມ່ນລູກຂອງຕົນ ກໍມີສິດຮ້ອງຟ້ອງຕໍ່ສານ ເພື່ອປະຕິເສດຄວາມເປັນພໍ່. ການຮ້ອງຟ້ອງເພື່ອປະຕິເສດການເປັນພໍ່ ໃຫ້ດຳເນີນພາຍໃນເວລາໜຶ່ງປີ ນັບແຕ່ວັນທີ່ໄດ້ຮູ້ວ່າເດັກເກີດ.

ຈຸດປະສົງ	ເພື່ອກຳນົດເພື່ອໃຫ້ຮູ້ກ່ຽວກັບ ການດຳເນີນການຮ້ອງຟ້ອງປະຕິເສດລູກທີ່ເກີດຈາກເມຍ ບໍ່ແມ່ນລູກຂອງຕົນ.
ຕົວຢ່າງ	**ກ** ແລະ **ຂ** ເປັນຜົວເມຍກັນ. **ຂ** ໄດ້ໃຫ້ກຳເນີດລູກ **ຄ** ໃນວັນທີ 1 ມັງກອນ 2020, ແຕ່ວ່າ **ກ** ຜູ້ເປັນຜົວໄດ້ໄປຕ່າງປະເທດຕັ້ງແຕ່ ວັນທີ 1 ມັງກອນ 2018 ຈົນຮອດ ວັນທີ 1 ທັນວາ 2019. ສະນັ້ນ **ກ** ສາມາດຮ້ອງຟ້ອງຕໍ່ສານເພື່ອພິຈາລະນາຕັດສິນວ່າ **ຄ** ບໍ່ແມ່ນລູກຂອງຕົນ ພາຍໃນກຳນົດ 1 ປີ ນັບແຕ່ວັນທີ **ກ** ໄດ້ຮູ້ວ່າ **ຄ** ເກີດ. ຖ້າກາຍກຳນົດເວລາ 1 ປີ **ກ** ບໍ່ສາມາດຮ້ອງຟ້ອງຕໍ່ສານເພື່ອປະຕິເສດຄວາມເປັນພໍ່ ແລະ ຖືວ່າ **ຄ** ເປັນລູກຂອງ **ກ.**
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງຂຶ້ນໃໝ່ ໂດຍການສຶກສາປະມວນກົດໝາຍແພ່ງ ຂອງຕ່າງປະເທດ. ກົດໝາຍວ່າດ້ວຍຄອບຄົວ ປີ 2009 ແລະ ກົດໝາຍວ່າດ້ວຍ ທະບຽນຄອບຄົວ ປີ 2018 ບໍ່ໄດ້ກຳນົດລະອຽດກ່ຽວກັບສິດຂອງຜູ້ເປັນຜົວໃນການປະຕິເສດການເປັນພໍ່.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 774 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ; ມາດຕາ 89 ວັກ 2 ຂອງກົດໝາຍແຕ່ງດອງ ແລະ ຄອບຄົວ ຫວຽດນາມ 2014.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ຂ. ລູກລ້ຽງ

ມາດຕາ 199 ການເອົາເດັກມາເປັນລູກລ້ຽງ

ການເອົາລູກຂອງຜູ້ອື່ນມາເປັນລູກລ້ຽງນັ້ນ ພໍ່ລ້ຽງ ແມ່ລ້ຽງ ແລະ ຍາດພີ່ນ້ອງຂອງພໍ່ລ້ຽງແມ່ລ້ຽງ ໃຫ້ຖືວ່າເດັກຜູ້ນັ້ນ ເປັນຄືກັນກັບລູກຄິງ, ອ້າຍເອື້ອຍນ້ອງຄິງ ແລະ ຫຼານຄິງຂອງຕົນ, ສ່ວນເດັກຜູ້ນັ້ນກໍຈະໝົດສິດ ແລະ ພັນທະຈາກ ພໍ່ ແມ່ ແລະ ຍາດພີ່ນ້ອງຄິງຂອງຕົນ.

ການເປັນລູກລ້ຽງນັ້ນ ຕ້ອງໃຫ້ມີເອກະສານຢັ້ງຢືນຢ່າງຖືກຕ້ອງ ຕາມທີ່ໄດ້ກຳນົດໄວ້ໃນປະມວນກົດໝາຍສະບັບນີ້.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ກ່ຽວກັບ ຜົນຂອງການເອົາເດັກມາເປັນລູກລ້ຽງ ເຊິ່ງເຮັດໃຫ້ເກີດສາຍພົວພັນ ສິດ ແລະ ພັນທະ ຄືກັນ ກັບ ລູກຄົງ ລະຫວ່າງ ພໍ່ແມ່ລ້ຽງ ແລະ ລູກລ້ຽງ, ກົງກັນຂ້າມ ສາຍພົວພັນພໍ່ແມ່ຄົງ ກໍຈະສິ້ນສຸດລົງ.
ຕົວຢ່າງ	**1. ກ** ແລະ **ຂ** ເປັນຜົວ ເມຍ ກັນມາຫຼາຍປີ ແຕ່ບໍ່ມີລູກ, ທັງສອງຈຶ່ງຕົກລົງໄປເອົາ **ຄ** ລູກຂອງ **ງ** ແລະ **ຈ** ມາເປັນລູກລ້ຽງ, ພາຍຫຼັງທີ່ **ກ** ແລະ **ຂ** ໄດ້ໄປຈົດທະບຽນການເປັນລູກລ້ຽງ ຕາມມາດຕາ 203 ຂອງປະມວນກົດໝາຍແພ່ງ ແລ້ວຈະເກີດສາຍພົວພັນ ສິດ ແລະ ພັນທະລະຫວ່າງ **ກ, ຂ** ແລະ **ຄ** ຈະມີຕາມກົດໝາຍ ຄື ກັບລູກຄົງ ແຕ່ສາຍພົວພັນລະຫວ່າງ **ງ, ຈ** ແລະ **ຄ** ກໍຈະສິ້ນສຸດລົງ. **2. ກ** ແລະ **ຂ** ເປັນຜົວເມຍກັນມາຫຼາຍປີ ແຕ່ບໍ່ມີລູກ, ທັງສອງຈຶ່ງຕົກລົງໄປເອົາ **ຄ** ລູກຂອງ **ງ** ແລະ **ຈ** ທີ່ເປັນລູກນ້ອງສາວ ມາເປັນລູກລ້ຽງ, ແຕ່ **ກ** ແລະ **ຂ** ບໍ່ໄດ້ໄປຈົດທະບຽນການເປັນລູກລ້ຽງ ແຕ່ໄດ້ຈົດທະບຽນເອົາ **ຄ** ເຂົ້າໃນປຶ້ມສຳມະໂນຄົວ ໂດຍບັນທຶກໃນປຶ້ມສຳມະໂນຄົວວ່າ **ຄ** ນັ້ນແມ່ນ ລູກ ຕາມມາດຕາ 6 ວັກ 1 ຂອງປະມວນກົດໝາຍແພ່ງ ຊຶ່ງຈະເກີດ ສາຍພົວພັນ ສິດ ແລະ ພັນທະລະຫວ່າງ **ກ, ຂ** ແລະ **ຄ** ຈະມີຕາມກົດໝາຍ ຄື ກັບລູກຄົງ. ແຕ່ສາຍພົວພັນ ລະຫວ່າງ **ງ, ຈ** ແລະ **ຄ** ກໍຈະສິ້ນສຸດລົງ.
ເຫດຜົນໃນການຮັກສາເດີມ	ມາດຕານີ້ຮັກສາເນື້ອໃນເດີມຂອງ ມາດຕາ 37 ຂອງກົດໝາຍວ່າດ້ວຍຄອບຄົວ ປີ 2008.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 809 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 205 ຜົນຂອງການເປັນລູກລ້ຽງ; ມາດຕາ 29 ຂອງກົດໝາຍວ່າດ້ວຍທະບຽນຄອບຄົວ ປີ 2018; ມາດຕາ 47 ຂອງດຳລັດວ່າດ້ວຍການເອົາເດັກໄປເປັນລູກລ້ຽງ ເລກ ທີ 194/ລບ ປີ 2014.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 200 ເງື່ອນໄຂຜູ້ຮ້ອງຂໍເອົາເດັກເປັນລູກລ້ຽງ

ພົນລະເມືອງລາວ ທີ່ຮ້ອງຂໍເອົາເດັກໄປເປັນລູກລ້ຽງ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ມີອາຍຸແຕ່ ສິບແປດປີຂຶ້ນໄປ ໃນເວລາເຮັດຄຳຮ້ອງຂໍເອົາເດັກໄປເປັນລູກລ້ຽງ ແລະ ມີອາຍຸຫ່າງກັບເດັກທີ່ຂໍໄປເປັນລູກລ້ຽງນັ້ນຢ່າງໜ້ອຍ ສິບແປດປີ;
2. ມີສະຕິສຳປະຊັນຍະສົມບູນ;
3. ມີຖານະທາງດ້ານເສດຖະກິດໝັ້ນຄົງ;
4. ມີບ່ອນຢູ່ຖາວອນ;
5. ມີວຽກເຮັດງານທຳທີ່ແນ່ນອນ;
6. ມີສຸຂະພາບແຂງແຮງ, ບໍ່ເປັນພະຍາດຕິດແປດທີ່ຮ້າຍແຮງ, ບໍ່ຕິດສິ່ງເສບຕິດ;
7. ບໍ່ເຄີຍຖືກສານຕັດສິນລົງໂທດຕັດອິດສະລະພາບ ຍ້ອນການກະທຳຜິດໂດຍເຈດຕະນາ ແລະ ບໍ່ຖືກປົດສິດໃນການເປັນພໍ່ແມ່;
8. ໄດ້ຜ່ານການປະເມີນ ຈາກຄະນະກຳມະການຂັ້ນເມືອງ ແລະ ມີຊື່ຢູ່ໃນບັນຊີຂອງຜູ້ທີ່ມີເງື່ອນໄຂ ແລະ ມີຄວາມເໝາະສົມໃນການຮັບເດັກເປັນລູກລ້ຽງ.

ໃນກໍລະນີທີ່ ເມຍ ຫຼື ຜົວ ຕ້ອງການເອົາເດັກມາເປັນລູກລ້ຽງ ຕ້ອງໃຫ້ມີຄຳເຫັນດີຂອງຜົວ ຫຼື ເມຍ.

ຈຸດປະສົງ	ກຳນົດເພື່ອໃຫ້ເຂົ້າໃຈ ເງື່ອນໄຂ ຂອງບຸກຄົນ ທີ່ຈະຂໍເປັນພໍ່ລ້ຽງ, ແມ່ລ້ຽງ.
ຕົວຢ່າງ	**ກ** ອາຍຸ 37 ປີ, ມີອາຊີບເປັນພະນັກງານ, ມີຖານະເສດຖະກິດທີ່ດີ, ແລະ **ຂ** ຜູ້ເປັນເມຍ ອາຍຸ 36 ປີ ມີອາຊີບເປີດບໍລິການ ເຮັດຮ້ານອາຫານ ທັງສອງຖືສັນຊາດລາວ, ມີທີ່ຢູ່ຖາວອນ, ມີສຸຂະພາບທາງດ້ານຮ່າງກາຍ, ຈິດໃຈແຂງແຮງດີ ບໍ່ເປັນພະຍາດຕິດແປດທີ່ຮ້າຍແຮງ ແລະ ບໍ່ເຄີຍຖືກສານຕັດສິນປົດສິດຈາການເປັນພໍ່ແມ່. **ກ** ແລະ **ຂ** ຍັງໄດ້ຜ່ານການປະເມີນ ຈາກຄະນະກຳມະການຂັ້ນເມືອງ ແລະ ມີຊື່ໃນບັນຊີຜູ້ມີເງື່ອນໄຂ ແລະ ມີຄວາມເໝາະສົມ ໃນການຮັບເດັກເປັນລູກລ້ຽງ. ກໍລະນີນີ້ ຖືໄດ້ວ່າ **ກ** ແລະ **ຂ** ກໍມີເງື່ອນໄຂຄົບຖ້ວນໃນການຂໍເອົາເດັກມາເປັນລູກລ້ຽງໄດ້. ດັ່ງນັ້ນ, ຖ້າຫາກທັງສອງເຫັນດີ ກໍສາມາດນຳເອົາ **ຄ** ມາເປັນລູກລ້ຽງ.
ເຫດຜົນໃນການປັບປຸງ	ມາດຕານີ້ໄດ້ປັບປຸງມາຈາກ ມາດຕາ 38 ຂອງກົດໝາຍວ່າດ້ວຍຄອບຄົວ ປີ 2008 ປ່ຽນຫົວຂໍ້ ຄຳວ່າ ເງື່ອນໄຂຂອງການເອົາເດັກມາເປັນລູກລ້ຽງ ປ່ຽນເປັນ ເງື່ອນໄຂຜູ້ຮ້ອງຂໍເອົາເດັກມາເປັນລູກລ້ຽງ ແລະ ໄດ້ປັບປຸງເນື້ອໃນ ມາເປັນຂໍ້ເພື່ອຄວາມກະຈ້າງແຈ້ງ ແລະ ເຂົ້າໃຈງ່າຍຂຶ້ນຕື່ມ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 792, 795 ແລະ 798 ຂອງປະມວນກົດໝາຍແພ່ງ (ຍີ່ປຸ່ນ).
ມາດຕາອ້າງອີງ	ມາດຕາ 47 ຂອງດຳລັດວ່າດ້ວຍການເອົາເດັກໄປເປັນລູກລ້ຽງ ເລກທີ 194/ລບ ປີ 2014.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 201 ເງື່ອນໄຂຂອງເດັກທີ່ຈະເປັນລູກລ້ຽງ

ເດັກທີ່ຈະເປັນລູກລ້ຽງ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ຍັງບໍ່ພົ້ນກະສຽນອາຍຸ;
2. ຂາດການເບິ່ງແຍງລ້ຽງດູ ຫຼື ບໍ່ສາມາດຢູ່ນຳຄອບຄົວ ຫຼື ບໍ່ສາມາດກັບຄືນສູ່ຄອບຄົວຂອງຕົນ;
3. ມີຄຳເຫັນດີຢ່າງເປັນລາຍລັກອັກສອນຂອງເດັກ ຖ້າວ່າເດັກຫາກມີອາຍຸສິບປີຂຶ້ນໄປ, ຄຳເຫັນດີນັ້ນຕ້ອງບໍ່ມີການບັງຄັບ;
4. ມີຄຳເຫັນດີຢ່າງເປັນລາຍລັກອັກສອນ ຂອງພໍ່ຄົງ, ແມ່ຄົງ ຫຼື ຜູ້ປົກຄອງເດັກ ຫຼື ພາກສ່ວນທີ່ຮັບຜິດຊອບລ້ຽງດູເດັກ, ຄຳເຫັນດີນັ້ນ ຕ້ອງບໍ່ມີການບັງຄັບ;
5. ຜ່ານການປະເມີນ ແລະ ມີຄຳເຫັນດີຂອງຄະນະຮັບຜິດຊອບ ພິຈາລະນາການເອົາເດັກເປັນລູກລ້ຽງ ແລະ ມີຊື່ຢູ່ໃນບັນຊີຂອງເດັກ ທີ່ສາມາດໃຫ້ເປັນລູກລ້ຽງ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ກ່ຽວກັບ ເງື່ອນໄຂຂອງເດັກທີ່ຈະເອົາໄປເປັນລູກລ້ຽງ.
ຕົວຢ່າງ	**ກ** ເປັນເດັກນ້ອຍ ບໍ່ໄດ້ຮັບການເບິ່ງແຍງລ້ຽງດູທີ່ດີຈາກ ພໍ່ ແມ່, **ກ** ຈຶ່ງໄດ້ໄປອາໄສຢູ່ນຳລຸງປ້າ, ແຕ່ລຸງປ້ານັ້ນ ກໍມີພາລະລ້ຽງດູລູກຫຼາຍຄົນ, ຊຶ່ງເຫັນໄດ້ວ່າ ບໍ່ສາມາດຄາດຫວັງການເບິ່ງແຍງຈາກພໍ່ແມ່ຄົງ ຂອງ **ກ** ໄດ້, ສະນັ້ນ ການປົກປ້ອງ ດ້ວຍການ ເປັນລູກລ້ຽງ ແມ່ນສິ່ງທີ່ເໝາະສົມສຳລັບ **ກ**, ພໍ່ແມ່ຄົງຂອງ **ກ** ກໍເຫັນດີ ແລະ **ກ** ມີອາຍຸ 11 ປີ ກໍໄດ້ເຫັນດີເຊັ່ນດຽວກັນ ແລະ **ກ** ໄດ້ຂໍລົງທະບຽນການເປັນລູກລ້ຽງເປັນທີ່ຮຽບຮ້ອຍແລ້ວ. ສະນັ້ນ **ກ** ຈຶ່ງມີເງື່ອນໄຂຄົບຖ້ວນໃນການດຳເນີນການຂໍເປັນລູກລ້ຽງໄດ້.
ເຫດຜົນໃນການປັບປຸງ	ມາດຕານີ້ ໄດ້ປັບປຸງມາຈາກ ມາດຕາ 38 ຂອງກົດໝາຍວ່າດ້ວຍຄອບຄົວ ປີ 2008 ໂດຍໄດ້ປັບປຸງ ຫົວຂໍ້ມາດຕາ ແລະ ປັບປຸງເນື້ອໃນໃຫ້ເຂົ້າໃຈແຈ້ງຕື່ມ ກ່ຽວກັບເງື່ອນໄຂຂອງເດັກທີ່ຈະເປັນລູກລ້ຽງ ຊຶ່ງໄດ້ມີການປ່ຽນແປງເນື້ອໃນ ຂອງມາດຕາດັ່ງກ່າວ ຊຶ່ງໄດ້ເພີ່ມເງື່ອນໄຂ ຂໍ້ 2, 4, ແລະ 5 ຂອງມາດຕານີ້.

ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 806/3, 817/5, 817/6 ແລະ 817/7 ຂອງປະມວນກົດໝາຍແພ່ງ ຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 208 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 202 ວິທີການເອົາເດັກມາເປັນລູກລ້ຽງ

ການສະເໜີ ແລະ ການພິຈາລະນາການເອົາເດັກເປັນລູກລ້ຽງ ໃຫ້ປະຕິບັດຕາມລະບຽບການຕ່າງຫາກ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ ຂັ້ນຕອນ ແລະ ວິທີການ ທີ່ຈະເອົາເດັກມາເປັນລູກລ້ຽງ.
ຕົວຢ່າງ	**ກ** ແລະ **ຂ** ຢາກໄດ້ **ຄ** ມາເປັນລູກລ້ຽງ, ທັງສອງຕ້ອງຂຽນຄຳຮ້ອງໄປຍື່ນຕໍ່ນາຍບ້ານ ບ່ອນທີ່ **ຄ** ອາໄສຢູ່ ເພື່ອໃຫ້ຄະນະບ້ານພິຈາລະນາ ວ່າ **ກ** ແລະ **ຂ** ທີ່ເປັນຜົວເມຍນັ້ນ ສົມຄວນຈະເປັນພໍ່ລ້ຽງ, ແມ່ລ້ຽງ ຫຼື ບໍ່ ຖ້າເຫັນວ່າສົມຄວນນັ້ນ ບ້ານຕ້ອງອອກຂໍ້ຕົກລົງ ກ່ຽວກັບການເປັນລູກລ້ຽງ ແລ້ວສົ່ງໃຫ້ເຈົ້າໜ້າທີ່ທະບຽບຄອບຄົວ ເພື່ອຈົດທະບຽນແລ້ວຈຶ່ງມອບໃຫ້ພໍ່ລ້ຽງ ແມ່ລ້ຽງເປັນຫຼັກຖານ.
ເຫດຜົນໃນການປັບປຸງ	ມາດຕາ 202 ນີ້ ໄດ້ປັບປຸງມາຈາກ ມາດຕາ 39 ຂອງກົດໝາຍວ່າດ້ວຍຄອບຄົວ ປີ 2008 ໂດຍໄດ້ຕັດເນື້ອໃນບາງສ່ວນອອກ ເພາະວ່າໄດ້ກຳນົດໄວ້ລະບຽບການ ສະເພາະແລ້ວ ຊຶ່ງດຳລັດວ່າດ້ວຍການເອົາເດັກໄປເປັນລູກລ້ຽງ ເລກທີ 194/ລບ ວັນທີ 12 ມີຖຸນາ 2014 ໄດ້ກຳນົດລະບຽບສະເພາະ ກ່ຽວກັບຂັ້ນຕອນການເອົາເດັກໄປເປັນລູກລ້ຽງ ເລີ່ມຈາກມາດຕາ 35 -47.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 798 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 35-47 ຂອງດຳລັດວ່າດ້ວຍການເອົາເດັກໄປເປັນລູກລ້ຽງ ເລກທີ 194/ລບ, ວັນທີ 12 ມີຖຸນາ 2014.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 203 ການຈົດທະບຽນການເປັນລູກລ້ຽງ

ການຈົດທະບຽນການເອົາເດັກເປັນລູກລ້ຽງ ສຳລັບພົນລະເມືອງລາວດ້ວຍກັນ ໃຫ້ດຳເນີນຢູ່ຫ້ອງການຍຸຕິທຳຂັ້ນເມືອງ ບ່ອນພໍ່ລ້ຽງ, ແມ່ລ້ຽງອາໄສຢູ່ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍທະບຽນຄອບຄົວ.

ສຳລັບການຈົດທະບຽນການເອົາເດັກເປັນລູກລ້ຽງຂອງຄົນຕ່າງປະເທດນັ້ນ ໃຫ້ດຳເນີນຢູ່ກົມທີ່ຮັບຜິດຊອບວຽກງານທະບຽນຄອບຄົວຂອງກະຊວງຍຸຕິທຳ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍທະບຽນຄອບຄົວ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ກ່ຽວກ່ຽວກັບ ຂັ້ນຕອນຂອງການຈົດທະບຽນເອົາເດັກມາເປັນລູກລ້ຽງ
ຕົວຢ່າງ	1. **ກ** ແລະ **ຂ** ຈະເອົາ **ຄ** ມາເປັນລູກລ້ຽງນັ້ນ **ກ** ແລະ **ຂ** ຕ້ອງຂຽນຄຳຮ້ອງຍື່ນຕໍ່ອົງການທະບຽບຄອບຄົວ ຂອງຂະແໜງການຍຸຕິທຳ ບ່ອນທີ່ **ກ** ແລະ **ຂ** ອາໄສຢູ່. ພາຍຫຼັງອົງການທະບຽນຄອບຄົວໄດ້ຮັບຄຳຮ້ອງແລ້ວ ກຳນົດສາມສິບວັນ ທາງລັດຖະການ ນັບແຕ່ມື້ໄດ້ຮັບຄຳຮັບຮ້ອງ ເປັນຕົ້ນໄປ ອົງການທະບຽບຄອບຄົວ ຕ້ອງຈົດທະບຽນ ແລະ ອອກໃບຢັ້ງຢືນ ການເອົາເດັກມາເປັນລູກລ້ຽງ ຕາມມາດຕາ 29 ວັກ2 ຂອງກົດໝາຍວ່າດ້ວຍທະບຽນຄອບຄົວ ປີ2018.

	2. ກ ແລະ **ຂ** ເປັນຄົນປະເທດ **ຈ** ມາດຳລົງຊີວິດ ຢູ່ປະເທດລາວ ມີຈຸດປະສົງ ເອົາ **ຄ** ເດັກນ້ອຍລາວ ມາເປັນລູກລ້ຽງນັ້ນ ຕ້ອງຍື່ນຄຳຮ້ອງ ຕໍ່ກົມທີ່ຮັບຜິດຊອບວຽກງານທະບຽນຄອບຄົວ ຂອງກະຊວງຍຸຕິທຳ. ກົມດັ່ງກ່າວ ຕ້ອງພິຈາລະນາຈົດທະບຽນ ແລະ ອອກໃບຢັ້ງຢືນ ການເອົາເດັກເປັນລູກລ້ຽງ ພາຍໃນເວລາ ສາມສິບວັນ ນັບແຕ່ວັນໄດ້ຮັບຄຳຮ້ອງເປັນຕົ້ນໄປ ແລ້ວແຈ້ງໃຫ້ກະຊວງພາຍໃນ, ກະຊວງປ້ອງກັນຄວາມສະຫງົບ ແລະ ກະຊວງການຕ່າງປະເທດ ຕາມມາດຕາ 29 ວັກ 3 ກົດໝາຍວ່າດ້ວຍທະບຽນຄອບຄົວ ປີ 2018.
ເຫດຜົນໃນການປັບປຸງ	ມາດຕານີ້ ປັບປຸງເນື້ອໃນ ມາດຕາ 29 ຂອງກົດໝາຍວ່າດ້ວຍ ທະບຽນຄອບຄົວ 2018.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 66, 68/2 ຂອງກົດໝາຍທະບຽນຄອບຄົວ ຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 29 ຂອງກົດໝາຍວ່າດ້ວຍທະບຽບຄອບຄົວ ປີ 2018.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 204 ການຮັກສາຄວາມລັບ ກ່ຽວກັບການເອົາເດັກເປັນລູກລ້ຽງ

ບຸກຄົນໃດ ຫາກໄດ້ເປີດເຜີຍຄວາມລັບກ່ຽວກັບການເປັນລູກລ້ຽງ ໂດຍບໍ່ມີການເຫັນດີຂອງພໍ່ລ້ຽງ ແມ່ລ້ຽງ ຫຼື ໃນກໍລະນີທີ່ ພໍ່ລ້ຽງ ແມ່ລ້ຽງ ຫາກໄດ້ເສຍຊີວິດ ຖ້າຫາກບໍ່ມີການເຫັນດີຂອງເຈົ້າໜ້າທີ່ທະບຽນຄອບຄົວແລ້ວ ບຸກຄົນນັ້ນ ກໍຈະມີຄວາມຮັບຜິດຊອບທາງອາຍາ.

ຈຸດປະສົງ	ເພື່ອກຳນົດ ການເປີດເຜີຍຂໍ້ມູນກ່ຽວກັບ ການເກີດສາຍພົວພັນຄອບຄົວ ທີ່ເປັນຂໍ້ມູນສ່ວນຕົວ ຂອງບຸກຄົນໃດໜຶ່ງ ອາດມີຄວາມເປັນໄປໄດ້ ທີ່ຈະໄປລະເມີດ ຄວາມເປັນສ່ວນຕົວ (Privacy) ຂອງບຸກຄົນອື່ນ ສະນັ້ນ, ມາດຕານີ້ ຈຶ່ງກຳນົດ ເພື່ອປົກປ້ອງຂໍ້ມູນດັ່ງກ່າວ.
ຕົວຢ່າງ	**1. ກ** ແລະ **ຂ** ໄດ້ເອົາ **ຄ** ມາເປັນລູກລ້ຽງມາແຕ່ຍັງນ້ອຍໂດຍທີ່ **ງ** ໄດ້ຮູ້ວ່າ **ຄ** ເປັນລູກລ້ຽງຂອງ **ກ** ແລະ **ຂ** ແຕ່ເອົາຄວາມລັບ ຂອງການເປັນລູກລ້ຽງ ຂອງ **ຄ** ອອກມາເປີດເຜີຍ ໂດຍບໍ່ມີການເຫັນດີຂອງພໍ່ລ້ຽງ ແມ່ລ້ຽງ ຄື **ກ** ແລະ **ຂ** ກໍລະນີນີ້ **ງ** ຜູ້ເປີດເຜີຍຄວາມລັບ ຈະມີຄວາມຮັບຜິດຊອບທາງອາຍາ ຕາມມາດຕາ 229 ຂອງປະມວນກົດໝາຍອາຍາ. **2. ກ** ແລະ **ຂ** ໄດ້ເອົາ **ຄ** ມາເປັນລູກລ້ຽງ ໂດຍທີ່ **ງ** ໄດ້ຮູ້ວ່າ **ຄ** ເປັນລູກລ້ຽງ ຂອງ **ກ** ແລະ **ຂ.** ຕໍ່ມາ ໃນປີ 2005 **ກ** ໄດ້ເສຍຊີວິດ, ປີ 2008 **ຂ** ໄດ້ເສຍຊີວິດ ທີ່ເປັນພໍ່ລ້ຽງ ແລະ ແມ່ລ້ຽງ **ງ** ໄດ້ເອົາຄວາມລັບຂອງການເປັນລູກລ້ຽງ ຂອງ **ຄ** ມາເປີດເຜີຍ ໂດຍບໍ່ໄດ້ຮັບອະນຸຍາດຈາກເຈົ້າໜ້າທີ່ທະບຽນຄອບຄົວ, ກໍລະນີນີ້ **ງ** ຈະມີຄວາມຮັບຜິດຊອບທາງອາຍາ ຕາມມາດຕາ 229 ປະມວນກົດໝາຍອາຍາ. **3. ກ** ແລະ **ຂ** ໄດ້ເອົາ **ຄ** ມາເປັນລູກລ້ຽງ ໂດຍທີ່ **ງ** ແລະ **ຈ** ເປັນພໍ່ແມ່ທີ່ໃຫ້ເກີດເນີດ **ຄ.** ຕໍ່ມາໃນປີ 2005 **ກ** ໄດ້ເສຍຊີວິດ, ຕໍ່ມາປີ 2008 **ຂ** ໄດ້ເສຍຊີວິດ, ມາໃນ ປີ 2009 **ງ** ແລະ **ຈ** ໄດ້ເອົາຄວາມລັບຂອງການເປັນລູກລ້ຽງ ຂອງ **ຄ** ມາເປີດເຜີຍ ໂດຍບໍ່ໄດ້ຮັບອະນຸຍາດ ຈາກເຈົ້າໜ້າທີ່ທະບຽນຄອບຄົວ ກໍລະນີນີ້ **ງ** ແລະ **ຈ** ກໍຈະມີຄວາມຮັບຜິດຊອບທາງອາຍາ ຕາມມາດຕາ 229 ປະມວນກົດໝາຍອາຍາຄືກັບຕົວຢ່າງ 2.
ເຫດຜົນໃນການປັບປຸງ	ມາດຕານີ້ ໄດ້ປັບປຸງມາຈາກ ມາດຕາ 40 ຂອງກົດໝາຍວ່າດ້ວຍຄອບຄົວ ປີ 2008.

ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 229 ຂອງປະມວນກົດໝາຍອາຍາ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 205 ຜົນຂອງການເປັນລູກລ້ຽງ

ສາຍພົວພັນ ລະຫວ່າງ ພໍ່ລ້ຽງ ແມ່ລ້ຽງ ກັບ ລູກລ້ຽງ ເກີດຂຶ້ນ ນັບແຕ່ວັນຈົດທະບຽນ ເປັນຕົ້ນໄປ ແລະ ສາຍພົວພັນ ລະຫວ່າງ ພໍ່ຄົງ ແມ່ຄົງ ກັບລູກ ທີ່ຖືກນຳເອົາໄປເປັນລູກລ້ຽງ ກໍຈະສິ້ນສຸດລົງໃນເວລາດຽວກັນ.

ລູກລ້ຽງ ຕ້ອງໃສ່ນາມສະກຸນ ນຳພໍ່ລ້ຽງ ຫຼື ແມ່ລ້ຽງ.

ສຳລັບ ເດັກທີ່ໃສ່ຊື່ມາກ່ອນແລ້ວ ຖ້າວ່າພໍ່ລ້ຽງ ແມ່ລ້ຽງ ຫາກເຫັນວ່າບໍ່ເໝາະສົມ ກໍອາດຈະປ່ຽນ ຊື່ ໃໝ່ໃຫ້ເດັກກໍໄດ້. ໃນກໍລະນີທີ່ເດັກນັ້ນ ຫາກມີອາຍຸຮອດ ສິບປີແລ້ວຈະປ່ຽນຊື່ໃໝ່ໄດ້ ກໍຕໍ່ເມື່ອໄດ້ຮັບ ການເຫັນດີຈາກເດັກນັ້ນ ເສຍກ່ອນ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ ກ່ຽວກັບ ຜົນຂອງການເປັນລູກລ້ຽງ, ວັນເວລາ ທີ່ເກີດຜົນ, ສາຍພົວພັນ ກັບ ພໍ່ແມ່ຄົງ ແລະ ຊື່ ຂອງລູກລ້ຽງ.
ຕົວຢ່າງ	1. **ກ** ແລະ **ຂ** ໄດ້ຂຽນຄຳຮ້ອງ, ເພື່ອຂໍເອົາ **ງ** ມາເປັນລູກລ້ຽງ ແລ້ວຍື່ນຕໍ່ນາຍບ້ານບ່ອນທີ່ **ງ** ອາໄສຢູ່ ຊຶ່ງຄະນະບ້ານນັ້ນມີສິດພິຈາລະນາວ່າ **ກ** ແລະ **ຂ** ສົມຄວນເປັນພໍ່ ແມ່ລ້ຽງ ຫຼື ບໍ່ ແລ້ວຈຶ່ງສະເໜີໄປຫາເຈົ້າໜ້າທີ່ທະບຽນ ຄອບຄົວ ເພື່ອຂຶ້ນທະບຽນ ການເປັນລູກລ້ຽງຂອງ **ກ** ແລະ **ຂ** ດັ່ງນັ້ນ, ສາຍພົວພັນທາງດ້ານກົດໝາຍ ລະຫວ່າງ ພໍ່ລ້ຽງ ແມ່ລ້ຽງ ກັບ ລູກລ້ຽງ ເກີດຂຶ້ນ ນັບແຕ່ວັນທີ່ໄດ້ຈົດທະບຽນເປັນຕົ້ນໄປ ແລະ ສາຍພົວພັນທາງດ້ານ ກົດໝາຍ ລະຫວ່າງ ພໍ່ຄົງ ແມ່ຄົງ ຈະສິ້ນສຸດລົງ ໃນເວລາຈົດທະບຽນ ເປັນ ຕົ້ນໄປ. ພາຍຫຼັງທີ່ໄດ້ຈົດທະບຽນແລ້ວ **ງ** ກໍຈະມາໃສ່ນາມສະກຸນຮ່ວມ ກັບພໍ່ລ້ຽງ ແລະ ແມ່ລ້ຽງ. 2. ພາຍຫຼັງທີ່ **ກ** ແລະ **ຂ** ໄດ້ຈົດທະບຽນການເອົາ **ງ** ມາເປັນລູກລ້ຽງ ແລ້ວ **ກ** ແລະ **ຂ** ເຫັນວ່າຊື່ຂອງ **ງ** ນັ້ນບໍ່ເໝາະສົມ ດັ່ງນັ້ນ **ກ** ແລະ **ຂ** ກໍສາມາດປ່ຽນ ຊື່ໃຫ້ **ງ** ໃໝ່. ແຕ່ໃນກໍລະນີ **ງ** ຮອດ 10 ປີ ແລ້ວນັ້ນການປ່ຽນຊື່ນັ້ນ ຕ້ອງໄດ້ຖາມ **ງ** ເສຍກ່ອນ. 3. ພາຍຫຼັງທີ່ **ກ** ແລະ **ຂ** ໄດ້ຈົດທະບຽນການເອົາ **ງ** ມາເປັນລູກລ້ຽງຖືກຕ້ອງ ແລ້ວ , **ກ** ແລະ **ຂ** ພ້ອມດ້ວຍຍາດພີ່ນ້ອງຂອງ **ກ** ແລະ **ຂ** ໃຫ້ຖືວ່າ **ງ** ເປັນ ຄືກັນ ກັບ ລູກຄົງ ແລະ ຫຼານຄົງຂອງຕົນ, **ງ** ມີສິດສືບທອດ ມູນມໍລະດົກ ຂອງ **ກ** ແລະ **ຂ** ຕາມມາດຕາ 577 ວັກ 2 ຂອງປະມວນກົດໝາຍແພ່ງ.
ເຫດຜົນໃນການປັບປຸງ	ມາດຕານີ້ແມ່ນປັບປຸງມາຈາກ ມາດຕາ 41 ຂອງກົດໝາຍວ່າດ້ວຍຄອບຄົວ ປີ 2008.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 809 ແລະ 810 ຂອງປະມວນກົດມາຍແພ່ງ ຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 199, 203 ແລະ 212 ຂອງປະມວນກົດໝາຍແພ່ງ.

ຂໍ້ມູນອື່ນ ຫຼື ປະເພນີສານ	ສຳລັບບັນຫານີ້ ແມ່ນມີຄວາມຈຳເປັນຕ້ອງໄດ້ສືບຕໍ່ຄົ້ນຄວ້າ. ກ່ຽວກັບການສິ້ນສຸດສາຍພົວພັນ ກັບ ພໍ່ແມ່ຄົງ ໂດຍເຍືອງໄປໃສ່ການບໍ່ອານຸຍາດໃຫ້ແຕ່ດອງ ຕາມມາດຕາ 151. ເນື່ອງຈາກວ່າ ບໍ່ມີມາດຕາໃດທີ່ກຳນົດຈະແຈ້ງວ່າ ຫຼັງ ຈາກທີ່ສາຍພົວພັນ ພໍ່ແມ່ຄົງສິ້ນສຸດລົງ ຈະສາມາດແຕ່ງດອງກັບ ເອື້ອຍ, ອ້າຍ, ນ້ອງຄົງຂອງຕົນໄດ້ ຫຼື ບໍ່, ສາມາດແຕ່ງດອງກັບ ລຸງປ້າ ຫຼື ຫຼາຍຊາຍ, ຫຼານສາວ ໄດ້ ຫຼື ບໍ່, ສະນັ້ນ ຈຳເປັນຕ້ອງໄດ້ອະທິບາຍໃນຕົວຢ່າງ. ນອກຈາກນີ້ ກວດກາຄືນ ເບິ່ງວ່າມີລະບຽບການສະເພາະ ຫຼື ບໍ່.

ມາດຕາ 206 ການສິ້ນສຸດການເປັນລູກລ້ຽງ

ການເປັນລູກລ້ຽງ ຈະສິ້ນສຸດລົງ ຕາມຄຳຕັດສິນຂອງສານ ເມື່ອມີການຮັບຮູ້ວ່າການເອົາເດັກມາເປັນລູກລ້ຽງນັ້ນ ໂມຄະ ຫຼື ມີການຖອນການເປັນລູກລ້ຽງ.

ການເອົາເດັກເປັນລູກລ້ຽງ ຈະໂມຄະ ຖ້າຫາກໄດ້ເຮັດຂຶ້ນດ້ວຍການໃຊ້ເອກະສານປອມ ຫຼື ໂດຍບຸກຄົນທີ່ບໍ່ສາມາດເປັນພໍ່ລ້ຽງ ແມ່ລ້ຽງໄດ້ ຫຼື ເຮັດຂຶ້ນດ້ວຍການລະເມີດເງື່ອນໄຂຂອງການເອົາເດັກມາເປັນລູກລ້ຽງ ຊຶ່ງໄດ້ກຳນົດໄວ້ໃນມາດຕາ 200 ຂອງປະມວນກົດໝາຍສະບັບນີ້.

ການເປັນລູກລ້ຽງທີ່ບໍ່ຕອບສະໜອງຜົນປະໂຫຍດຂອງເດັກ ກໍຈະຖືກຖອນການເປັນລູກລ້ຽງ.

ພໍ່ຄົງ ແມ່ຄົງ, ພໍ່ລ້ຽງ ແມ່ລ້ຽງ ຫຼື ບຸກຄົນອື່ນ ທີ່ມີຜົນປະໂຫຍດກ່ຽວຂ້ອງ ແລະ ຫົວໜ້າອົງການ ໄອຍະການປະຊາຊົນ ກໍມີສິດຮ້ອງຂໍລົບລ້າງ ຫຼື ຂໍຖອນການເປັນລູກລ້ຽງໄດ້.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນ ກ່ຽວກັບ ເງື່ອນໄຂ ຂອງການສິ້ນສຸດ ການເປັນລູກລ້ຽງ, ຂອບເຂດຂອງຜູ້ທີ່ມີສິດຮ້ອງຂໍໃຫ້ສິ້ນສຸດການເປັນລູກລ້ຽງ ແລະ ເງື່ອນໄຂ ທີ່ ພາໃຫ້ການຂໍເອົາເດັກມາເປັນລູກລ້ຽງເປັນໂມຄະ.
ຕົວຢ່າງ	**1.** ພາຍຫຼັງທີ່ **ກ** ແລະ **ຂ** ໄດ້ສຳເລັດການຂໍເອົາ **ຄ** ມາເປັນລູກລ້ຽງ ແລ້ວ, ຕໍ່ມາ ພໍ່ ແມ່ເກີດຂອງ **ຄ** ຈຶ່ງຮູ້ວ່າ ເອກະສານທີ່ **ກ** ແລະ **ຂ** ໄດ້ເຮັດມາເພື່ອຂໍເອົາ **ຄ** ໄປເປັນລູກລ້ຽງນັ້ນ ເປັນເອກະສານປອມ, ຄວາມຈິງແລ້ວ **ກ** ແລະ **ຂ** ເປັນຄອບຄົວທີ່ບໍ່ມີຄວາມຖືກຕ້ອງ ຄືມັກມີບັນຫາພາຍໃນຄອບຄົວ, ບໍ່ມີ ບ່ອນຢູ່ຖາວອນ ແລະ ທັງຄູ່ ບໍ່ມີອາຊີບ ທີ່ແນ່ນອນ, ດັ່ງນັ້ນ **ງ** ທີ່ເປັນພໍ່ເກີດ ຂອງ **ຄ** ຈຶ່ງສະເໜີຮ້ອງຂໍຕໍ່ສານ ເພື່ອຕັດສິນໃຫ້ການຈົດທະບຽນ ການເອົາ **ຄ** ໄປເປັນລູກລ້ຽງນັ້ນເປັນໂມຄະ, ເມື່ອສານໄດ້ຕັດສິນແລ້ວ ຖືວ່າການເປັນ ລູກລ້ຽງໄດ້ສິ້ນສຸດລົງນັບແຕ່ມື້ທີ່ມີຄຳຕັດສິນເປັນຕົ້ນໄປ. **2.** **ກ** ແລະ **ຂ** ໄດ້ຂໍເອົາ **ຄ** ມາເປັນລູກລ້ຽງ ເນື່ອງຈາກວ່າ **ກ** ແລະ **ຂ** ບໍ່ໄດ້ ເບິ່ງແຍງລ້ຽງດູ **ຄ** ຢ່າງເໝາະສົມຄື ໄດ້ເອົາ **ຄ** ມາລ້ຽງເພື່ອມາເປັນຄົນໃຊ້ໃນ ຄອບຄົວ, ບໍ່ສົ່ງເສີມໃຫ້ **ຄ** ມີການສຶກສາ, ຊຶ່ງໄດ້ເຮັດໃຫ້ **ຄ** ມີຄວາມອັບ ປະໂຫຍດ. ດັ່ງນັ້ນ **ງ** ທີ່ເປັນຍາດຕິພີ່ນ້ອງ ຂອງ **ຄ** ຈຶ່ງສະເໜີໄປຫາຫົວໜ້າ ອົງການໄອຍະການປະຊາຊົນ ເພື່ອສັ່ງຟ້ອງໃຫ້ສານຕັດສິນຖອນ ຫຼື ລົບລ້າງ ການເອົາເດັກມາເປັນລູກລ້ຽງ.
ເຫດຜົນໃນການປັບປຸງ	ມາດຕານີ້ໄດ້ປັບປຸງມາຈາກມາດຕາ42ກົດໝາຍວ່າດ້ວຍຄອບຄົວປີ2008ເນື່ອງ ຈາກວ່າມາດຕາດັ່ງກ່າວ ບໍ່ໄດ້ກຳນົດ ກ່ຽວກັບການສ້າງເອກະສານ ທີ່ເຮັດຂຶ້ນ ດ້ວຍການລະເມີດເງື່ອນໄຂຂອງການເອົາເດັກມາເປັນລູກລ້ຽງ ຊຶ່ງໄດ້ກຳນົດໄວ້ ໃນມາດຕາ 200 ຂອງປະມວນກົດໝາຍແພ່ງສະບັບນີ້, ລຶບຜົນປະໂຫຍດ ຂອງພໍ່ລ້ຽງ ແມ່ລ້ຽງອອກ ແລະ ໄດ້ເພີ່ມ ສິດ ຂອງຜູ້ຮ້ອງຂໍໂດຍ "ຫົວໜ້າອົງການ ໄອຍະການປະຊາຊົນ"ຕື່ມໃສ່ວັກທີ 4 ຂອງມາດຕານີ້.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງຂອງປະເທດອື່ນ	ມາດຕາ 802, 803,814 ແລະ 817/10 ຂອງປະມວນກົດໝາແພ່ງ (ຍີ່ປຸ່ນ).

ມາດຕາອ້າງອີງ	ມາດຕາ 200 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ຄ. ການເອົາເດັກໄປເປັນລູກລ້ຽງ ຂອງພົນລະເມືອງຕ່າງປະເທດ

ມາດຕາ 207 ເງື່ອນໄຂຂອງພໍ່ລ້ຽງ ແມ່ລ້ຽງ ທີ່ເປັນຄົນຕ່າງດ້າວ, ຄົນຕ່າງປະເທດ

ຄົນຕ່າງດ້າວ, ຄົນຕ່າງປະເທດ ທີ່ຮ້ອງຂໍເອົາເດັກເປັນລູກລ້ຽງ ຕ້ອງມີເງື່ອນໄຂ ຕາມທີ່ໄດ້ກຳນົດໄວ້ ໃນມາດຕາ 200 ຂອງປະມວນກົດໝາຍສະບັບນີ້ ຍົກເວັ້ນຂໍ້ 1 ຊຶ່ງຜູ້ຮ້ອງຂໍຕ້ອງມີອາຍຸແຕ່ ສາມສິບປີຂຶ້ນໄປ ຫາ ຫ້າສິບປີໃນເວລາເຮັດຄຳຮ້ອງ.

ສຳລັບຜູ້ຮ້ອງຂໍທີ່ເປັນຄົນຕ່າງປະເທດ ແຕ່ເຊື້ອຊາດລາວ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນມາດຕາ 200 ຂອງປະມວນກົດໝາຍສະບັບນີ້.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ ກ່ຽວກັບ ເງື່ອນໄຂຂອງ ພໍ່ລ້ຽງ, ແມ່ລ້ຽງ ທີ່ເປັນຄົນຕ່າງປະເທດ ທີ່ອາໃສຢູ່ພາຍໃນ ສປປ ລາວ ຫຼື ຢູ່ຕ່າງປະເທດ ມາຂໍເອົາເດັກ ທີ່ເປັນຄົນລາວ ໄປເປັນລູກລ້ຽງ.
ຕົວຢ່າງ	**ກ** ອາຍຸ 45 ປີ ເປັນຜົວ ແລະ **ຂ** ອາຍຸ 40 ເປັນເມຍ ທັງສອງ ເປັນຄົນຕ່າງດ້າວ, ມີທີ່ຢູ່ຖາວອນ, ມີຖານະເສດຖະກິດໝັ້ນຄົງ, ມີສຸຂະພາບດີ ແລະ ບໍ່ເຄີຍຖືກສານ ຕັດສິນລົງໂທດມາກ່ອນ, ຜ່ານມາພວກກ່ຽວແມ່ນບໍ່ມີລູກ, **ກ** ແລະ **ຂ** ຢາກໄດ້ **ຄ** ທີ່ເປັນຄົນລາວມາເປັນລູກລ້ຽງ ແລະ ກໍໄດ້ຮັບການເຫັນດີຈາກ ພໍ່ແມ່ຄົງຂອງ **ຄ** ມາແລ້ວ, ດັ່ງນັ້ນ ພວກກ່ຽວຈຶ່ງສາມາດຂຽນຄຳຮ້ອງ ເພື່ອຍື່ນຕໍ່ພາກສ່ວນທີ່ ກ່ຽວຂ້ອງ. ແຕ່ຖ້າຫາກວ່າ **ກ** ແລະ **ຂ** ມີເອກະສານຢັ້ງຢືນວ່າ ພວກກ່ຽວເປັນ ຄົນເຊື້ອຊາດລາວ ນັ້ນ **ກ** ແລະ **ຂ** ຈະບໍ່ມີຂໍ້ຈຳກັດກ່ຽວກັບອາຍຸ 30 ຫາ 50 ປີ.
ເຫດຜົນໃນການປັບປຸງ	ມາດຕານີ້ໄດ້ປັບປຸງມາຈາກ ມາດຕາ 51 ກົດໝາຍວ່າດ້ວຍ ຄອບຄົວ 2008 ໂດຍໄດ້ແບ່ງມາດຕານີ້ ອອກເປັນຫຼາຍມາດຕາ ຈາກມາດຕາ 207-211 ເພື່ອກຳນົດລະອຽດ ກ່ຽວກັບເງື່ອນໄຂຂອງຄົນຕ່າງດ້າວ, ຄົນຕ່າງປະເທດ ແລະ ຄົນທີ່ບໍ່ມີສັນຊາດ ຈະເອົາເດັກທີ່ເປັນຜົນລະເມືອງລາວມາເປັນລູກລ້ຽງ. ນອກ ຈາກນັ້ນ, ຍັງໄດ້ກຳນົດເງື່ອນໄຂທາງດ້ານອາຍຸ ສາມສິບປີຂຶ້ນໄປ ຫາ ຫ້າສິບປີ ເພີ່ມເຂົ້າ ໃນວັກ 1 ຂອງມາດຕານີ້. ໃນມາດຕານີ້ ນຳໃຊ້ສຳລັບ ຜູ້ທີ່ອາໄສຢູ່ພາຍໃນ ສປປ ລາວ ແລະ ຜູ້ທີ່ອາໄສ ຢູ່ຕ່າງປະເທດ.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງ ຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 200 ຂອງກົດໝາຍປະມວນແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 208 ເງື່ອນໄຂຂອງເດັກທີ່ຈະໄປເປັນລູກລ້ຽງ

ເງື່ອນໄຂຂອງເດັກທີ່ຈະໄປເປັນລູກລ້ຽງຂອງຄົນຕ່າງດ້າວ, ຄົນຕ່າງປະເທດ ຕ້ອງມີເງື່ອນໄຂຕາມທີ່ ໄດ້ກຳນົດໄວ້ໃນມາດຕາ 201 ຂອງປະມວນກົດໝາຍສະບັບນີ້ ຍົກເວັ້ນ ຂໍ້ 1 ຊຶ່ງເດັກຕ້ອງມີອາຍຸບໍ່ເກີນ ແປດປີ.

ສຳລັບເດັກ ທີ່ເປັນຍາດໃກ້ຊິດກັບຜູ້ຮ້ອງຂໍ, ເດັກພິເສດ ຫຼື ອ້າຍເອື້ອຍນ້ອງຂອງເດັກ ທີ່ຈະໄປເປັນ ລູກລ້ຽງ ມີຜູ້ເກີນອາຍຸ ແປດປີ ໃຫ້ພິຈາລະນາເປັນກໍລະນີພິເສດ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ ເຖິງເງື່ອນໄຂ ຂອງເດັກທີ່ຈະໄປເປັນລູກລ້ຽງ ຂອງຄົນຕ່າງດ້າວ, ຕ່າງປະເທດ.
ຕົວຢ່າງ	**1. ກ** ແລະ **ຂ** ເປັນຄົນ **ຈ** ທີ່ອາໃສຢູ່ ສປປ ລາວມີຈຸດປະສົງ ຢາກຂໍເອົາເດັກ **ຄ** ທີ່ເປັນຄົນລາວມາເປັນລູກລ້ຽງ ເພື່ອໃຫ້ສາມາດດຳເນີນການ ຂໍເດັກມາເປັນລູກລ້ຽງໄດ້ນັ້ນ **ຄ** ຈຳເປັນຕ້ອງໃຫ້ຄົບ ຕາມເງື່ອນໄຂ ການເປັນລູກລ້ຽງຕາມ ມາດຕາ 201 ປະມວນກົດໝາຍແພ່ງ ແລະ ຖ້າໃນເວລາ **ກ** ແລະ **ຂ** ຍື່ນຄຳຮ້ອງຂໍເອົາ **ຄ** ມາເປັນລູກລ້ຽງນັ້ນ, **ຄ** ຜູ້ເປັນເດັກຕ້ອງມີອາຍຸ ບໍ່ໃຫ້ກາຍ 8 ປີ ຈຶ່ງບໍ່ຈຳເປັນຕ້ອງຂໍຄຳເຫັນດີຈາກເດັກກໍໄດ້. **2.** ຜົວເມຍ **ກ** ແລະ **ຂ** ເປັນຄົນປະເທດ **ຈ** ອາໃສຢູ່ ສ ປປ ລາວກຳລັງຄິດວ່າ ຈະ ຂໍເອົາເດັກທີ່ຍັງບໍ່ທັນກະສຽນອາຍຸ **ຄ** ຊຶ່ງເປັນຄົນລາວມາເປັນລູກລ້ຽງ. ເພື່ອ ໃຫ້ສາມາດດຳເນີນການ ຂໍເດັກມາເປັນລູກລ້ຽງໄດ້, **ຄ** ຜູ້ເປັນເດັກຈຳເປັນ ຕ້ອງມີຄົບເງື່ອນໄຂ ການເປັນລູກລ້ຽງຕາມມາດຕາ 201 ຂອງປະມວນ ກົດໝາຍແພ່ງ ແລະ ໃນເວລາຍື່ນ ຄຳຮ້ອງຂໍ ຜູ້ກ່ຽວຕ້ອງມີອາຍຸ ບໍ່ໃຫ້ກາຍ 8 ປີ ຈຶ່ງບໍ່ຈຳເປັນຕ້ອງຂໍຄຳເຫັນດີ ຈາກເດັກກໍໄດ້. ນອກຈາກນີ້ **ກ** ແລະ **ຂ** ຍັງຍື່ນຄຳຮ້ອງ ຂໍເອົາເອື້ອຍຄົງຂອງ **ຄ** ທີ່ອາໃສຢູ່ນຳກັນມາ ຊື່ວ່າ **ງ** ອາຍຸ 11 ປີ ມາເປັນລູກລ້ຽງນຳ. ໃນກໍລະນີນີ້ ເປັນກໍລະນີພິເສດເພາະວ່າ **ງ** ອາຍຸກາຍ 10 ປີ, ສະນັ້ນ ເພື່ອໃຫ້ສາມາດຂໍເອົາ **ງ** ມາເປັນລູກລ້ຽງໄດ້ ຈຳເປັນຕ້ອງຂໍຄຳເຫັນ ຈາກຜູ້ກ່ຽວ ຕາມມາດຕາ 201 ຂໍ້ 3.
ເຫດຜົນໃນການປັບປຸງ	ຍ້ອນວ່າ ມາດຕາ 51 ຂອງກົດໝາຍວ່າດ້ວຍຄອບຄົວ ແມ່ນບໍ່ໄດ້ກຳນົດເງື່ອນ ໄຂຂອງເດັກທີ່ຈະໄປເປັນລູກລ້ຽງແບບລວມໆ ໂດຍບໍ່ໄດ້ກຳນົດກ່ຽວກັບເງື່ອນ ໄຂຂອງເດັກທີ່ຈະໄປເປັນ ລູກລ້ຽງ ຂອງຄົນຕ່າງດ້າວ, ຕ່າງປະເທດ ວ່າມີແນວ ໃດມາດຕາດັ່ງກ່າວຈຶ່ງໄດ້ແຍກອອກ ເພື່ອໃຫ້ມີຄວາມເຂົ້າໃຈງ່າຍ.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 201 ຂອງປະມວນກົດໝາຍແພ່ງ; ມາດຕາ 19, 33 ແລະ 34 ດຳລັດ ເລກທີ 194/ລບ, ລົງວັນທີ 12 ມິຖຸນາ 2014 ວ່າດ້ວຍການເອົາເດັກໄປເປັນລູກລ້ຽງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 209 ການເອົາເດັກເປັນລູກລ້ຽງ ຢູ່ຕ່າງປະເທດ

ຄົນລາວຢູ່ຕ່າງປະເທດ ຈະເອົາເດັກທີ່ເປັນພົນລະເມືອງລາວ ຊຶ່ງຢູ່ຕ່າງປະເທດ ເປັນລູກລ້ຽງນັ້ນ ໃຫ້ຍື່ນຄຳຮ້ອງ ແລະ ຂໍຈົດທະບຽນຢູ່ ສະຖານທູດ ຫຼື ກົງສຸນລາວ ຫຼື ອົງການທີ່ກ່ຽວຂ້ອງຢູ່ ສປປ ລາວ ໂດຍ ປະຕິບັດຕາມກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ.

ຖ້າວ່າພໍ່ລ້ຽງ ແມ່ລ້ຽງ ຫາກບໍ່ແມ່ນພົນລະເມືອງລາວແລ້ວ ການເອົາເດັກເປັນລູກລ້ຽງນັ້ນ ຕ້ອງໄດ້ຮັບ ອະນຸຍາດ ຈາກອົງການທີ່ມີສິດອຳນາດກ່ຽວຂ້ອງ ຂອງ ສປປ ລາວ ເສຍກ່ອນ.

ຄົນຕ່າງປະເທດ, ຄົນຕ່າງດ້າວ ຫຼື ຄົນບໍ່ມີສັນຊາດ ທີ່ອາໄສຢູ່ ສປປ ລາວ ຫຼື ຢູ່ຕ່າງປະເທດ ຈະເອົາ ເດັກທີ່ເປັນພົນລະເມືອງລາວ ຊຶ່ງຢູ່ ສປປ ລາວ ໄປເປັນລູກລ້ຽງ ໃຫ້ປະຕິບັດຕາມກົດໝາຍ ແລະ ລະບຽບ ການຂອງ ສປປ ລາວ.

ຈຸດປະສົງ	ເພື່ອໃຫ້ຮູ້ເຖິງຂັ້ນຕອນ ແລະ ເງື່ອນໄຂ ຂອງການເອົາເດັກໄປເປັນລູກລ້ຽງຢູ່ຕ່າງປະເທດ.
ຕົວຢ່າງ	1. ຜົວເມຍ **ກ** ແລະ **ຂ** ຄົນລາວ ທີ່ອາໃສຢູ່ປະເທດ **ສ** ໄດ້ຕົກລົງຂໍ ເອົາເດັກທີ່ເປັນພົນລະເມືອງລາວ **ຄ** ຊຶ່ງອາໃສຢູ່ປະເທດ **ສ** ມາເປັນລູກລ້ຽງ. ສະນັ້ນ ກ່ອນທີ່ຈະສາມາດດຳເນີນການຂໍເອົາ **ຄ** ມາເປັນລູກລ້ຽງໄດ້ນັ້ນ, ຜົວເມຍ **ກ** ແລະ **ຂ** ຕ້ອງມີເງື່ອນໄຂ ຕາມມາດຕາ 200 ແລະ **ຄ** ຕ້ອງມີເງື່ອນໄຂ ຕາມມາດຕາ 201 ຂອງປະມວນກົດໝາຍແພ່ງ ແລ້ວໃຫ້ຍື່ນຄຳຮ້ອງ ແລະ ຂໍຈົດທະບຽນນຳສະຖານທູດ ຫຼື ກົງສຸນລາວທີ່ຕັ້ງຢູ່ປະເທດ **ສ** ຫຼື ມາຍື່ນຕໍ່ອົງການທີ່ກ່ຽວຂ້ອງຢູ່ ສປປ ລາວ. 2. ຜົວ ເມຍ **ກ** ແລະ **ຂ** ເປັນຄົນປະເທດ **ສ** ໄດ້ຕົກລົງ ຂໍເອົາເດັກທີ່ເປັນພົນລະເມືອງລາວ **ຄ** ຊຶ່ງອາໃສຢູ່ ສປປ ລາວ ມາເປັນລູກລ້ຽງ. ສະນັ້ນ ກ່ອນທີ່ຈະສາມາດດຳເນີນການຂໍເອົາ **ຄ** ມາເປັນລູກລ້ຽງໄດ້ນັ້ນ ຕ້ອງໄດ້ຮັບອະນຸຍາດ ຈາກອົງການທີ່ມີສິດອຳນາດກ່ຽວຂ້ອງ ຂອງ ສປປ ລາວ ເສຍກ່ອນ. ຜົວ ເມຍ **ກ** ແລະ **ຂ** ຕ້ອງມີເງື່ອນໄຂ ຕາມມາດຕາ 200 ແລະ **ຄ** ຕ້ອງມີ ເງື່ອນໄຂຕາມມາດຕາ 201 ຂອງປະມວນກົດໝາຍແພ່ງ. 3. ຜົວ ເມຍ **ກ** ແລະ **ຂ** ເປັນຄົນປະເທດ **ຊ** ອາໃສຢູ່ ສປປ ລາວ, ໄດ້ຕົກລົງ ຂໍເອົາ **ຄ** ຊຶ່ງເປັນຄົນລາວ ມາເປັນລູກລ້ຽງ. ສະນັ້ນ ກ່ອນທີ່ຈະດຳເນີນການ ຂໍເດັກມາເປັນລູກລ້ຽງໄດ້ນັ້ນ, ຜົວເມຍ **ກ** ແລະ **ຂ** ຕ້ອງມີເງື່ອນໄຂຕາມ ມາດຕາ 200 ແລະ **ຄ** ຈຳເປັນ ຕ້ອງມີຄົບເງື່ອນໄຂການເປັນລູກລ້ຽງຕາມ ມາດຕາ 201 ໃນເວລາຍື່ນຄຳຮ້ອງຂໍນັ້ນ, ຖ້າ **ຄ** ມີອາຍຸ ບໍ່ໃຫ້ກາຍ 8 ປີ ກໍບໍ່ຈຳເປັນຕ້ອງຂໍຄຳເຫັນດີຈາກເດັກກໍໄດ້.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 51 ຂອງກົດໝາຍວ່າດ້ວຍຄອບຄົວແມ່ນໄດ້ກຳນົດເງື່ອນໄຂ ຂອງເດັກທີ່ຈະໄປ ເປັນລູກລ້ຽງແບບລວມໆ ໂດຍບໍ່ໄດ້ກຳນົດແຈ້ງ ກ່ຽວກັບເງື່ອນໄຂ ຂອງເດັກທີ່ຈະໄປເປັນລູກລ້ຽງ ຂອງຄົນຕ່າງດ້າວ, ຕ່າງປະເທດ ວ່າມີແນວໃດ ມາດຕາດັ່ງກ່າວ ຈຶ່ງໄດ້ແຍກອອກ ເພື່ອໃຫ້ມີຄວາມ ເຂົ້າໃຈງ່າຍ.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງ ຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 201 ແລະ 211 ຂອງປະມວນກົດໝາຍແພ່ງ; ດຳລັດ ເລກທີ 194/ລບ, ລົງວັນທີ 12 ມີຖຸນາ 2014 ວ່າດ້ວຍການເອົາເດັກໄປ ເປັນລູກລ້ຽງ.
ຂໍ້ມູນອື່ນ ຫຼື ປະ ເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 210 ການເອົາເດັກມາເປັນລູກລ້ຽງຢູ່ ສປປ ລາວ

ຄົນລາວຈະເອົາເດັກທີ່ເປັນພົນລະເມືອງຕ່າງປະເທດ, ມາເປັນລູກລ້ຽງຢູ່ ສປປ ລາວ ໃຫ້ປະຕິບັດຕາມ ກົດໝາຍ ແລະ ລະບຽບການຂອງປະເທດນັ້ນ ຖ້າກົດໝາຍ ແລະ ລະບຽບການນັ້ນ ຫາກບໍ່ຂັດກັບກົດໝາຍ ຂອງ ສປປ ລາວ.

ການເອົາເດັກທີ່ເປັນພົນລະເມືອງຕ່າງປະເທດ ມາເປັນລູກລ້ຽງນັ້ນ ຕ້ອງແຈ້ງໃຫ້ສະຖານທູດ ຫຼື ກົງ ສຸນລາວ ຮັບຮູ້ນຳ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນກ່ຽວກັບ ລະບຽບເກັບກ່ຽວການດຳເນີນເອົາເດັກມາເປັນ ລູກລ້ຽງໃນກໍລະນີທີ່ ຄົນລາວເອົາເດັກທີ່ເປັນພົນລະເມືອງຕ່າງປະເທດ ມາເປັນ ລູກລ້ຽງ ຢູ່ ສ ປປ ລາວ.

ຕົວຢ່າງ	**ກ** ແລະ **ຂ** ຜົວ ເມຍ ກັນທັງສອງ ເປັນຄົນລາວ ໄດ້ໄປເຮັດວຽກຢູ່ປະເທດ **ຈ** ມີຈຸດປະສົງ ຢາກຂໍເອົາເດັກ **ຄ** ເປັນຄົນປະເທດ **ຈ** ມາເປັນລູກລ້ຽງຢູ່ ສປປ ລາວ. **ຄ** ມີອາຍຸ 8 ປີ ຊຶ່ງມີເງື່ອນໄຂ ການເປັນລູກລ້ຽງໄດ້ ຕາມກົດໝາຍ **ຈ** ດັ່ງນັ້ນ ຜົວເມຍ **ກ** ແລະ **ຂ** ຕ້ອງປະບັດຕາມຂັ້ນຕອນ ຂອງກົດໝາຍ **ຈ** ແລ້ວຕ້ອງ ໄດ້ແຈ້ງ ໃຫ້ສະຖານທູດ ຫຼື ກົງສຸນລາວຮັບຮູ້ນຳ ນອກຈາກນັ້ນ, ເງື່ອນໄຂຂອງ ການເອົາເດັກເປັນລູກລ້ຽງ ພາຍໃຕ້ກົດໝາຍ ຂອງລາວແມ່ນພຽງພໍ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງ ມາຈາກມາດຕາ 51 ຂອງກົດໝາຍວ່າດ້ວຍຄອບຄົວ ປີ 2008 ແມ່ນໄດ້ກຳນົດເງື່ອນໄຂຂອງເດັກທີ່ຈະໄປ ເປັນລູກລ້ຽງແບບລວມໆໂດຍບໍ່ໄດ້ ກຳນົດແຈ້ງກ່ຽວກັບເງື່ອນໄຂຂອງເດັກທີ່ຈະໄປເປັນລູກລ້ຽງ ຂອງຄົນຕ່າງດ້າວ, ຕ່າງປະເທດ ວ່າມີແນວໃດມາດຕາດັ່ງກ່າວຈຶ່ງໄດ້ແຍກອອກເພື່ອໃຫ້ມີຄວາມ ເຂົ້າໃຈງ່າຍ.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງ ຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 201 ແລະ 211 ຂອງປະມວນກົດໝາຍແພ່ງ; ດຳລັດ ເລກທີ 194/ລບ, ລົງວັນທີ 12 ມີຖຸນາ 2014 ວ່າດ້ວຍການເອົາເດັກ ໄປເປັນລູກລ້ຽງ.
ຂໍ້ມູນອື່ນ ຫຼື ປະ ເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 211 ວິທີການເອົາເດັກໄປເປັນລູກລ້ຽງ ຂອງຄົນຕ່າງປະເທດ, ຄົນຕ່າງດ້າວ ຫຼື ຄົນບໍ່ມີ ສັນຊາດ

ຄົນຕ່າງປະເທດ, ຄົນຕ່າງດ້າວ ຫຼື ຄົນບໍ່ມີສັນຊາດ ທີ່ຮ້ອງຂໍເອົາເດັກທີ່ເປັນພົນລະເມືອງລາວເປັນ ລູກລ້ຽງ ໃຫ້ຍື່ນຄຳຮ້ອງຫາກະຊວງຍຸຕິທຳ ເພື່ອພິຈາລະນາບົນພື້ນຖານ ການປະສານສົມທົບ ແລະ ເຫັນດີ ຈາກພາກສ່ວນທີ່ກ່ຽວຂ້ອງ ຕາມຂັ້ນຕອນທີ່ກຳນົດໄວ້ໃນລະບຽບການ ກ່ອນນຳສະເໜີຕໍ່ສຳນັກງານນາຍົກ ລັດຖະ ມົນຕີ ເພື່ອພິຈາລະນາຕົກລົງ.

ຈຸດປະສົງ	ເພື່ອໃຫ້ຮູ້ກ່ຽວກັບ ວິທີການດຳເນີນການເອົາເດັກມາເປັນລູກລ້ຽງ ໃນກໍລະນີ ທີ່ຜູ້ຮ້ອງ ຂໍແມ່ນຄົນຕ່າງປະເທດ,ຄົນຕ່າງດ້າວ ຫຼື ຄົນບໍ່ມີສັນຊາດ ທີ່ຮ້ອງຂໍເອົາ ເດັກທີ່ ເປັນພົນລະເມືອງລາວ ໄປເປັນລູກລ້ຽງຢູ່ຕ່າງປະເທດ.
ຕົວຢ່າງ	**ກ** ແລະ **ຂ** ເປັນ ຜົວ ເມຍ ກັນ ທັງສອງເປັນຄົນສັນຊາດ **ສ** ຢາກໄດ້ເດັກນ້ອຍລາວ ໄປເປັນລູກລ້ຽງ, ຖ້າວ່າ **ກ** ແລະ **ຂ** ຫາກມີເງື່ອນໄຂຄົບຖ້ວນ ຕາມມາດຕາ 200 ແລະ 207 ຂອງປະມວນກົດໝາຍແພ່ງ ລາວ ແລ້ວ **ກ** ແລະ **ຂ** ສາມາດຍື່ນຄຳ ຮ້ອງເພື່ອຂໍເອົາ **ຄ** ມາເປັນລູກລ້ຽງໄດ້ ຄື **ກ** ແລະ **ຂ** ຕ້ອງໄດ້ຍື່ນຄຳຮ້ອງຂໍເອົາ ເດັກໄປເປັນລູກລ້ຽງ ຊຶ່ງເອກະສານ ຕ້ອງເປັນພາສາລາວ ຖ້າເອກະສານໃດເປັນ ພາສາຕ່າງປະເທດ ຕ້ອງໄດ້ແປເປັນພາສາລາວ ແລະ ໄດ້ຮັບການຢັ້ງຢືນຄວາມ ຖືກຕ້ອງຈາກອົງການທະບຽນສານ, ກົມທະບຽນສານ ເພື່ອພິຈາລະນາ ຊຶ່ງ ກະຊວງຍຸຕິທຳ ຕ້ອງໃຫ້ຄຳປຶກສາແກ່ **ກ** ແລະ **ຂ,** ປະເມີນ **ກ** ແລະ **ຂ** ຖ້າມີຄວາມຈຳເປັນ ແລ້ວຈຶ່ງນຳໄປ ຂຶ້ນທະບຽນວ່າເປັນຜູ້ທີ່ມີເງື່ອນໄຂຖືກຕ້ອງ ສາມາດຮັບເອົາ **ຄ** ໄປເປັນລູກລ້ຽງໄດ້, ຈັບຄູ່ **ຄ** ກັບ **ກ** ແລະ **ຂ** ຫຼື ຄອບຄົວ ທີ່ເໝາະສົມ ແລະ ທົດລອງລ້ຽງດູ ຖ້າພິຈາລະນາແລ້ວເຫັນວ່າ ຖືກຕ້ອງ ຕາມລະບຽບການ ແລະ ກົດໝາຍແລ້ວກະຊວງຍຸຕິທຳ ຈະສົ່ງສຳນວນຄຳຮ້ອງ ຂໍການເອົາເດັກໄປເປັນລູກລ້ຽງນັ້ນ ເພື່ອສະເໜີໃຫ້ຫ້ອງວ່າການສຳນັກງານນາ ຍົກລັດຖະມົນຕີ ຖ້າເຫັນວ່າຖືກຕ້ອງສອດຄ່ອງຕາມລະບຽບການແລ້ວ ຫ້ອງ ວ່າການສຳນັກງານນາຍົກລັດຖະມົນຕີ ກໍຈະອອກແຈ້ງການອະນຸຍາດໃຫ້ເດັກ

	ໄປເປັນລູກລ້ຽງ ກັບຄືນໄປຍັງກະຊວງຍຸຕິທຳ ເພື່ອຈົດທະບຽນການເອົາເດັກໄປເປັນລູກລ້ຽງຕາມພາລະບົດບາດຕໍ່ໄປ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 51 ຂອງກົດໝາຍວ່າດ້ວຍຄອບຄົວ ປີ 2008 ຍັງກຳນົດບໍ່ທັນຈະແຈ້ງ ເຖິງພາກສ່ວນທີ່ມີສິດອຳນາດ ໃນການພິຈາລະນາ ແລະ ອະນຸຍາດໃຫ້ເອົາເດັກໄປເປັນລູກລ້ຽງນັ້ນ ວ່າມີພາກສ່ວນໃດແດ່ ສະນັ້ນ ມາດຕານີ້ຈຶ່ງໄດ້ກຳນົດໃຫ້ເຫັນ ກ່ຽວກັບຄົນຕ່າງປະເທດ, ຄົນຕ່າງດ້າວ ຫຼື ຄົນບໍ່ມີສັນຊາດ ທີ່ຮ້ອງຂໍເອົາເດັກທີ່ເປັນພົນລະເມືອງລາວ ໄປເປັນລູກລ້ຽງຢູ່ຕ່າງປະເທດ ຫຼື ຄົນຕ່າງດ້າວ, ຄົນທີ່ບໍ່ມີສັນສາດ ທີ່ອາໃສຢູ່ ສ ປປ ລາວ ຂໍເອົາເດັກນ້ອຍລາວ ຢູ່ ສປປ ລາວມາເປັນລູກລ້ຽງ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 202 ຂອງປະມວນກົດໝາຍແພ່ງ; ມາດຕາ 36,40 ແລະ 46 ດຳລັດ ເລກທີ 194/ລບ, ລົງວັນທີ 12 ມີຖຸນາ 2014 ວ່າດ້ວຍການເອົາເດັກໄປເປັນລູກລ້ຽງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 212 ຜົນຂອງການເອົາເດັກໄປເປັນລູກລ້ຽງ ຂອງຄົນຕ່າງປະເທດ, ຄົນຕ່າງດ້າວ ຫຼື ຄົນບໍ່ມີສັນຊາດ

ການເອົາເດັກໄປເປັນລູກລ້ຽງຂອງຄົນຕ່າງປະເທດ, ຄົນຕ່າງດ້າວ ຫຼື ຄົນບໍ່ມີສັນຊາດ ມີຜົນອັນດຽວກັນກັບທີ່ໄດ້ກຳນົດໄວ້ໃນມາດຕາ 205 ຂອງປະມວນກົດໝາຍສະບັບນີ້.

ຈຸດປະສົງ	ເພື່ອໃຫ້ຮູ້ຜົນທາງດ້ານກົດໝາຍ ຂອງການເອົາເດັກໄປເປັນລູກລ້ຽງ ຂອງຄົນຕ່າງປະເທດ, ຄົນຕ່າງດ້າວ ຫຼື ຄົນບໍ່ມີສັນຊາດ.
ຕົວຢ່າງ	**ກ** ແລະ **ຂ** ເປັນຄົນປະເທດ ຈ ໄດ້ເອົາ **ຄ** ເປັນເດັກນ້ອຍພົນລະເມືອງລາວໄປເປັນລູກລ້ຽງ. ອີງຕາມການຂໍເອົາເດັກມາເປັນລູກລ້ຽງ, ລະຫວ່າງ **ກ, ຂ** ແລະ **ຄ** ຈະເກີດມີສາຍພົວພັນ ສິດ ແລະ ພັນທະ ພໍ່ ແມ່ ລູກ ຕາມທີ່ກຳນົດໄວ້ໃນມາດຕາ 215 ຂອງປະມວນກົດໝາຍແພ່ງ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 48 ວັກ1 ຂອງດຳລັດ ເລກທີ 194/ລບ, ລົງວັນທີ 12 ມີຖຸນາ 2014 ວ່າດ້ວຍການເອົາເດັກໄປເປັນລູກລ້ຽງ. ມາດຕາ 41 ກົດໝາຍວ່າດ້ວຍຄອບຄົວ ປີ 2008
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 1598/27 ແລະ 1598/28 ປະມວນກົດໝາຍແພ່ງ ແລະພານິດໄທ ມາດຕາ 809 ແລະ 810 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ
ມາດຕາອ້າງອີງ	ມາດຕາ 199, 205, 215 ຂອງປະມວນກົດໝາຍແພ່ງ; ມາດຕາ 48 ວັກ1 ຂອງດຳລັດ ເລກທີ 194/ລບ, ລົງວັນທີ 12 ມີຖຸນາ 2014 ວ່າດ້ວຍການເອົາເດັກໄປເປັນລູກລ້ຽງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ງ. ລູກນ້ຳ

ມາດຕາ 213 ລູກນ້ຳ

ລູກນ້ຳ ແມ່ນ ລູກທີ່ຕິດມານຳຜົວ ຫຼື ເມຍ.
ລູກນ້ຳ ມີຖານະຄືກັນກັບລູກຄົງ ແລະ ລູກລ້ຽງ, ເວັ້ນເສຍແຕ່ ກົດໝາຍຫາກໄດ້ກຳນົດໄວ້ເປັນຢ່າງອື່ນ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນນິຍາມ ຂອງລູກນ້າ ແລະ ຖານະຂອງລູກນ້າ.
ຕົວຢ່າງ	**ກ** ໄດ້ແຕ່ງດອງກັບ **ຂ** ທີ່ມີລູກຕິດມານຳໜຶ່ງຄົນຄື **ຄ,** ຊຶ່ງຕໍ່ມາ **ກ** ແລະ **ຂ** ໄດ້ຕົກລົງໄປຂໍເອົາ **ງ** ມາເປັນລູກລ້ຽງ ດັ່ງນັ້ນສາຍພົວທາງດ້ານກົດໝາຍລະຫວ່າງ **ກ** ກັບ **ຂ** ແມ່ນຜົວເມຍ, ລະຫວ່າງ **ຂ** ກັບ **ຄ** ແມ່ນແມ່ລູກຄິງ, ລະຫວ່າງ **ກ** ກັບ **ຄ** ແມ່ນພໍ່ນ້າ ແລະ ລູກນ້າ, ລະຫວ່າງ **ກ, ຂ** ແລະ **ງ** ແມ່ນພໍ່ລ້ຽງ, ແມ່ລ້ຽງ ແລະ ລູກລ້ຽງ ຊຶ່ງ **ຄ** ທີ່ເປັນລູກນ້າຂອງ **ກ** ນັ້ນແມ່ນມີຖານະຄືກັນ ກັບ ລູກຄິງ ແລະ ລູກລ້ຽງຂອງ **ກ** ແລະ **ຂ. ຄ** ເປັນລູກນ້າຂອງ **ກ,** ມີຖານະຄືກັນ ກັບ ລູກຄິງ ຂອງ **ກ** ແລະ **ຂ.** ແຕ່ວ່າ, ລູກນ້າບໍ່ມີສິດສືບທອດຊັບສິນຊຶ່ງເປັນຊັບເດີມ ຂອງພໍ່ນ້າ ແລະ ແມ່ນ້າ ມາດຕາ 577 ວັກ 1 ຂໍ້ 3 ຂອງປະມວນກົດໝາຍແພ່ງ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງຂຶ້ນໃໝ່ ຍ້ອນວ່າກົດໝາຍວ່າດ້ວຍຄອບຄົວ ປີ 2008 ບໍ່ໄດ້ກຳນົດ ລະອຽດ ກ່ຽວກັບລູກນ້າ ແລະ ຖານະຂອງລູກນ້າ. ໃນການສ້າງຂຶ້ນໃໝ່ນີ້ ໄດ້ກຳນົດລະອຽດກ່ຽວກັບຄວາມຈຳເປັນ ແລະ ຄວາມ ສຳຄັນໃນທາງການປະຕິບັດຕໍ່ກັບສັງຄົມລາວເຮົາລະຫວ່າງ ລູກລ້ຽງ ແລະ ລູກນ້າ ກໍແມ່ນໃຫ້ປະຕິບັດ ຄື ກັນກັບລູກຄິງ. ເວັ້ນເສຍແຕ່ກົດໝາຍຫາກໄດ້ກຳນົດໄວ້ເປັນຢ່າງອື່ນ ໃນວັກ 2 ຂອງມາດຕານີ້ ເຊັ່ນມາດຕາ 577 ວັກ 1 ຂໍ້ 3 ໄດ້ກຳນົດວ່າ ສຳລັບລູກນ້າ ບໍ່ມີສິດໄດ້ຮັບພູດທີ່ ເປັນຊັບເດີມຂອງພໍ່ນ້າ ຫຼື ແມ່ນ້າ ທີ່ເສຍຊີວິດ.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງ ຂອງປະເທດອື່ນ	ຂໍ້ມູນກ່ຽວກັບມາດຕານີ້ປະມວນກົດໝາຍແພ່ງ ຂອງຫຼາຍໆປະເທດກໍບໍ່ໄດ້ ກຳນົດ.
ມາດຕາອ້າງອີງ	ມາດຕາ 139, 214, 574 ແລະ 577 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນຫຼື ປະເພນີສານ	ໃນທາງປະຕິບັດຂອງສັງຄົມລາວເຮົາໃນປັດຈຸບັນນີ້ກົດໝາຍໄດ້ກຳນົດໃຫ້ ລູກ ນ້າກໍມີສິດຄືດັ່ງດຽວກັນກັບລູກຄິງໃນບາງອັນເປັນຕົ້ນແມ່ນສິດໃນການສືບ ທອດມູນມໍຣະດົກ.

ມາດຕາ 214 ການສິ້ນສຸດການເປັນລູກນ້າ

ການເປັນລູກນ້າ ຈະສິ້ນສຸດລົງ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ພໍ່ນ້າ ຫຼື ແມ່ນ້າ ໄດ້ຢ່າຮ້າງ ກັບແມ່ຄິງ ຫຼື ພໍ່ຄິງຂອງຕົນ;
2. ການແຕ່ງດອງ ລະຫວ່າງພໍ່ນ້າ ຫຼື ແມ່ນ້າ ກັບແມ່ຄິງ ຫຼື ພໍ່ຄິງ ເປັນໂມຄະ.

ຈຸດປະສົງ	ເພື່ອເປັນການກຳນົດໃຫ້ເຫັນ ແຕ່ລະກໍລະນີທີ່ພາໃຫ້ສິ້ນສຸດ ການເປັນພໍ່ ແມ່ນ້າ ແລະ ລູກນ້າ.
ຕົວຢ່າງ	**ກ** ແຕ່ງດອງກັບ **ຂ** ທີ່ມີລູກຕິດມານຳໜຶ່ງຄົນຄື **ຄ** ດັ່ງນັ້ນ ສາຍພົວທາງດ້ານກົດ ໝາຍລະຫວ່າງ **ກ** ກັບ **ຂ** ແມ່ນຜົວເມຍ, ລະຫວ່າງ **ຂ** ກັບ **ຄ** ແມ່ນແມ່ລູກຄິງ, ລະຫວ່າງ **ກ** ກັບ **ຄ** ແມ່ນພໍ່ນ້າ, ແລະ ລູກນ້າ, ຊຶ່ງ ສາຍພົວພັນ ທາງດ້ານກົດ ໝາຍລະຫວ່າງ **ກ** ແລະ **ຄ** ໃນການເປັນລູກນ້ານັ້ນ ຈະສິ້ນສຸດ ຄື: 1. ຫຼັງຈາກນັ້ນ **ກ** ແລະ **ຂ** ໄດ້ຢ່າຮ້າງກັນ, ສາຍພົວພັນພໍ່ນ້າ-ລູກນ້າ ລະຫວ່າງ **ກ** ແລະ **ຄ** ກໍຈະສິ້ນສຸດລົງ. 2. ຫຼັງຈາກນັ້ນ ການແຕ່ງດອງລະຫວ່າງ **ກ** ແລະ **ຂ** ເປັນໂມຄະຕາມມາດຕາ 170 ຂອງປະມວນກົດໝາຍແພ່ງ ເນື່ອງຈາກໄດ້ມາຮູ້ພາຍຫຼັງວ່າ **ກ** ແລະ **ຂ** ທັງສອງແມ່ນ ລຸງ ກັບ ຫຼານ ຕາມມາດຕາ 158 ຂໍ້ 2, ມາດຕາ 151 ຂໍ້ 2. ສາຍພົວພັນ ພໍ່ນ້າ-ລູກນ້າ ລະຫວ່າງ ກ ແລະ ຄ ກໍຈະສິ້ນສຸດລົງ.

ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງຂຶ້ນໃໝ່ ເນື່ອງຈາກກົດໝາຍວ່າດ້ວຍຄອບຄົວ ປີ 2008 ບໍ່ໄດ້ກຳນົດລະອຽດ ກ່ຽວກັບ ລູກນ້ຳ ແລະ ຖານະຂອງ ລູກນ້ຳ. ໃນການສ້າງຂຶ້ນໃໝ່ນີ້ ໄດ້ຂຽນບອກໃຫ້ເຫັນແຕ່ລະກໍລະນີ ກ່ຽວກັບຄວາມຈຳເປັນ ແລະ ຄວາມສຳຄັນໃນທາງການປະຕິບັດຕໍ່ກັບສັງຄົມລາວເຮົາ ລະຫວ່າງ ລູກລ້ຽງ ແລະ ລູກນ້ຳ ກໍແມ່ນໃຫ້ປະຕິບັດຄືກັນ ກັບ ລູກຄົງ. ກ່ຽວກັບການສິ້ນສຸດ ການເປັນລູກນ້ຳ ແລະ ເຫັນວ່າມີຄວາມສຳຄັນຕໍ່ກັບສັງຄົມລາວຫຼາຍ ຊຶ່ງເປັນ ເຫດຜົນໃຫ້ມີການສ້າງມາດຕາໃໝ່ນີ້ຂຶ້ນ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ຂໍ້ມູນກ່ຽວກັບມາດຕານີ້ ປະມວນກົດໝາຍແພ່ງ ຂອງຫຼາຍໆປະເທດກໍບໍ່ໄດ້ກຳນົດ.
ມາດຕາອ້າງອີງ	ມາດຕາ 139, 213, 574 ແລະ 577 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ໝວດທີ 8
ສິດ ແລະ ພັນທະຂອງ ພໍ່ ແມ່ ແລະ ລູກ

ມາດຕາ 215 ສິດ ແລະ ພັນທະຂອງ ພໍ່ ແມ່ ໃນການປົກປ້ອງສິດ ແລະ ຜົນປະໂຫຍດຂອງລູກ

ພໍ່ ແມ່ ມີ ສິດ ແລະ ພັນທະເທົ່າທຽມກັນ ໃນການປົກປ້ອງສິດ ແລະ ຜົນປະໂຫຍດຂອງລູກ, ພໍ່ແມ່ເປັນຜູ້ຕາງໜ້າຕາມກົດໝາຍ ຂອງລູກທີ່ຍັງບໍ່ທັນພົ້ນກະສຽນອາຍຸ, ມີພັນທະປົກປ້ອງສິດ ແລະ ຜົນປະໂຫຍດ ຂອງລູກ ຢູ່ສານ, ສະຖານທີ່ເຮັດວຽກ, ໂຮງຮຽນ ແລະ ສະຖານທີ່ອື່ນ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ ວ່າ ພໍ່ແມ່ ມີສິດ ແລະ ພັນທະເທົ່າທຽມກັນ ໃນການປົກປ້ອງສິດ ແລະ ຜົນປະໂຫຍດຂອງລູກ ແລະ ເປັນຜູ້ຕາງໜ້າຕາມກົດໝາຍ ໃຫ້ລູກທີ່ຍັງບໍ່ເຖິງກະສຽນອາຍຸ.
ຕົວຢ່າງ	**1.** **ກ** ແລະ **ຂ** ເປັນຜົວເມຍກັນ, ມີລູກໜຶ່ງຄົນ ຄື **ຄ** ອາຍຸ 14 ປີ. ຜົວເມຍນີ້ສາມາດເປີດບັນຊີທະນາຄານອອກຊື່ **ຄ** ໃນຖານະເປັນຜູ້ຕາງໜ້າຕາມກົດໝາຍໄດ້. **2.** **ກ** ແລະ **ຂ** ເປັນຜົວເມຍກັນ, ມີລູກໜຶ່ງຄົນ ຄື **ຄ** ອາຍຸ 16 ປີ. **ຄ** ໄດ້ຢືມລົດຈັກຂອງ **ງ** ທີ່ເປັນໝູ່ໄປຂີ່ ແລ້ວ **ຄ** ໄດ້ລະເມີດກົດຈາລະຈອນພາໃຫ້ເກີດອຸບປະຕິເຫດ ຊຶ່ງໄດ້ເຮັດໃຫ້ລົດຈັກຂອງ **ງ** ເປ່ເພ ແລະ ຝ່າຍຄູ່ກໍລະນີໄດ້ຮັບຄວາມເສຍຫາຍ, ດັ່ງນັ້ນ **ກ** ແລະ **ຂ** ທີ່ເປັນພໍ່ແມ່ ມີພັນທະໄປເປັນຜູ້ຮັບຜິດຊອບ ຕໍ່ຄ່າເສຍຫາຍດັ່ງກ່າວແທນ **ຄ** ໃນຖານະເປັນຜູ້ຕາງໜ້າຕາມກົດໝາຍ.
ເຫດຜົນໃນການປັບປຸງ	ມາດຕານີ້ ປັບປຸງມາຈາກມາດຕາ 215 ໄດ້ສັງລວມວັກ 1 ແລະ ວັກ 2 ຂອງ ມາດຕາ 33 ກົດໝາຍວ່າດ້ວຍຄອບຄົວ ປີ 2008 ໄວ້ໃນມາດຕານີ້, ສຳລັບ ຄວາມຮັບຜິດຊອບ ຂອງພໍ່ແມ່ໃນເວລາລູກສ້າງຄວາມເສຍຫາຍ ທີ່ໄດ້ກຳນົດໄວ້ ໃນມາດຕາ 33 ກ່ຽວກັບ ຄວາມຮັບຜິດຊອບທາງແພ່ງ ໃນພາກຂໍ້ພູກພັນ ນອກສັນຍາ ມາດຕາ 487.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 820 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ; ມາດຕາ 73 ວັກ 1 ຂອງກົດໝາຍແຕ່ງດອງ ແລະ ຄອບຄົວ ຫວຽດນາມ ປີ 2014.
ມາດຕາອ້າງອີງ	ມາດຕາ 216-220 ແລະ 487 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 216 ພັນທະຂອງ ພໍ່ ແມ່ ໃນການສຶກສາອົບຮົມລູກ

ພໍ່ ແມ່ ຕ້ອງສຶກສາອົບຮົມລູກຂອງຕົນ ໃຫ້ມີແນວຄິດຮັກຊາດ, ຮັກຄວາມກ້າວໜ້າ, ເປັນຄົນດີ, ມີຄວາມກະຕັນຍູ, ມີແບບແຜນການດຳລົງຊີວິດທີ່ຜ່ອງໄສ ແລະ ສ້າງເງື່ອນໄຂ ໃຫ້ລູກໄດ້ຮັບການສຶກສາ ຮ່ຳຮຽນ ແລະ ເຄື່ອນໄຫວວຽກງານ ທີ່ເປັນປະໂຫຍດແກ່ຄອບຄົວ ແລະ ສັງຄົມ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ ກ່ຽວກັບພັນທະໃນການສຶກສາອົບຮົມ ຂອງພໍ່ແມ່ທີ່ຕ້ອງມີຕໍ່ລູກ ທີ່ຍັງບໍ່ເຖິງກະສຽນອາຍຸ.
ຕົວຢ່າງ	**ກ** ແລະ **ຂ** ເປັນພໍ່ແມ່ຂອງ **ຄ** ໃນຖານະທີ່ **ກ** ແລະ **ຂ** ເປັນພໍ່ແມ່ນັ້ນ ຕ້ອງໄດ້ຮັບຜິດຊອບ ໃນການສຶກສາອົບຮົມ **ຄ** ໃຫ້ມີແນວຄິດຮັກຊາດ, ຮັກຄວາມກ້າວໜ້າ, ໃຫ້ເປັນຄົນດີໃນສັງຄົມ, ມີຄວາມກະຕັນຍູຕໍ່ພໍ່ແມ່ ແລະ ຜູ້ອາວຸโສ, ມີແບບແຜນການດຳລົງຊີວິດທີ່ຜ່ອງໃສ. ແຕ່ຖ້າຫາກว່າ **ກ** ແລະ **ຂ** ບໍ່ອະນຸຍາດໃຫ້ **ຄ** ໄປໂຮງຮຽນ ໂດຍບໍ່ມີເຫດຜົນເຈາະຈົງ ໝາຍຄວາມວ່າ ບໍ່ໄດ້ປະຕິບັດພັນຕາມມາດຕານີ້. ນອກຈາກນັ້ນການກະທຳຂອງ **ກ** ແລະ **ຂ** ຍັງນຳໄປສູ່ການປົດສິດໃນການເປັນພໍ່ ແມ່ ແລະ ລູກ ຕາມມາດຕາ 220 ຂອງປະມວນກົດໝາຍແພ່ງ.
ເຫດຜົນໃນການຮັກສາເດີມ	ມາດຕານີ້ຮັກສາເນື້ອເດີມ ມາດຕາ 32 ວັກທີ 1 ຂອງກົດໝາຍວ່າດ້ວຍຄອບຄົວ ປີ 2008.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 820 ຂອງປະມວນກົດໝາຍແພ່ງ ຍີ່ປຸ່ນ; ມາດຕາ 69 ວັກ 3 ຂອງກົດໝາຍແຕ່ງດອງ ແລະ ຄອບຄົວ ຫວຽດນາມ 2014.
ມາດຕາອ້າງອີງ	ມາດຕາ 217 ແລະ 223 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 217 ພັນທະຂອງ ພໍ່ ແມ່ ໃນການເບິ່ງແຍງລ້ຽງດູລູກ

ພໍ່ ແມ່ ມີພັນທະເບິ່ງແຍງລ້ຽງດູລູກຂອງຕົນ ທີ່ຍັງບໍ່ທັນພົ້ນກະສຽນອາຍຸ ລວມທັງລູກທີ່ພົ້ນກະສຽນອາຍຸແລ້ວ ແຕ່ເປັນຜູ້ທີ່ບໍ່ມີຄວາມສາມາດທາງດ້ານການປະພຶດ ຫຼື ອອກແຮງງານ ເຊັ່ນ ບ້າເສຍຈິດ ຫຼື ພິການ.

ພັນທະລ້ຽງດູລູກນີ້ ຈະຕ້ອງໄດ້ປະຕິບັດຕໍ່ໄປ ເຖິງວ່າພໍ່ແມ່ຈະຍັງຢູ່ຮ່ວມກັນ ຫຼື ພໍ່ແມ່ຈະຢ່າຮ້າງກັນ ຫຼື ການແຕ່ງດອງເປັນໂມຄະກຳຕາມ. ພໍ່ ຫຼື ແມ່ ທີ່ເປັນຜູ້ລ້ຽງດູນັ້ນ ມີສິດຮ້ອງຟ້ອງເອົາຄ່າລ້ຽງດູລູກ ໃນໄລຍະທີ່ລູກຍັງບໍ່ພົ້ນກະສຽນອາຍຸ.

ຄ່າເບິ່ງແຍງລ້ຽງດູລູກຕໍ່ໜຶ່ງຄົນນັ້ນ ໃຫ້ອີງໃສ່ຄ່າຄອງຊີບໃນແຕ່ລະໄລຍະ ໂດຍຖືເອົາເຄິ່ງໜຶ່ງຂອງເງິນເດືອນຕ່ຳສຸດຂອງພະນັກງານລັດ ເປັນພື້ນຖານໃນການຄິດໄລ່.

ໃນກໍລະນີ ຜູ້ທີ່ມີພັນທະຈ່າຍຄ່າລ້ຽງດູລູກ ຫາກຕົກຢູ່ໃນສະພາບທີ່ຫຍຸ້ງຍາກທາງດ້ານເສດຖະກິດ ກໍສາມາດ ຮ້ອງຂໍໃຫ້ສານຫຼຸດຄ່າລ້ຽງດູລູກນັ້ນ.

ຈຸດປະສົງ	ກຳນົດເພື່ອໃຫ້ຮູ້ກ່ຽວກັບ, ພໍ່ແມ່ມີພັນທະ ເບິ່ງແຍງລ້ຽງດູ ລູກຍັງບໍ່ທັນພົ້ນກະສຽນອາຍຸ ລວມທັງລູກທີ່ພົ້ນກະສຽນອາຍຸແລ້ວແຕ່ພິການ, ການດຳເນີນ ໃສ່ກໍລະນີທີ່ພໍ່ແມ່ປ່ອຍປະລະເລີຍພັນທະ ເບິ່ງແຍງລ້ຽງດູລູກ, ວິທີຄິດໄລ່ຄ່າເບິ່ງແຍງລ້ຽງດູລູກ ແລະ ການດຳເນີນຮ້ອງຂໍປ່ຽນແປງພັນທະເບິ່ງແຍງລ້ຽງດູລູກ.
ຕົວຢ່າງ	1. **ກ** ແລະ **ຂ** ເປັນຜົວເມຍກັນ, ທັງສອງມີລູກນຳກັນ 2 ຄົນຄື **ຄ** ອາຍຸ 19 ປີ ເປັນລ່ອຍ ຂາເປັນອຳມະພາດ ທັງສອງເບື້ອງ ບໍ່ສາມາດອອກແຮງງານ ແລະ ຊ່ວຍເຫຼືອຕົນເອງໄດ້ ແລະ **ງ** ມີອາຍຸ 13 ປີ, ໃນກໍລະນີນີ້ **ກ** ແລະ **ຂ** ແມ່ນ ມີພັນທະ ໃນການເບິ່ງແຍງລ້ຽງດູລູກທັງສອງ ຮ່ວມກັນ.

	2. **ກ** ແລະ **ຂ** ເປັນພີ່ນ້ອງເມຍກັນ, ທັງສອງມີລູກນຳກັນ 2 ຄົນຄື **ຄ** ອາຍຸ 20 ປີ ແຕ່ **ຄ** ເປັນອຳມະພາດ ຊຶ່ງບໍ່ສາມາດອອກແຮງງານ ແລະ ຊ່ວຍເຫຼືອຕົນເອງໄດ້ ແລະ **ງ** ອາຍຸ 13 ປີ. **ກ** ແລະ **ຂ** ໄດ້ຢ່າຮ້າງກັນ ແຕ່ລູກທັງ 2 ແມ່ນຍັງຢູ່ນຳແມ່ ເຖິງວ່າສາຍພົວພັນພີ່ນ້ອງເມຍຂອງ **ກ** ແລະ **ຂ** ຈະສິ້ນສຸດໄປແລ້ວກໍຕາມ ແຕ່ພັນທະໃນການເປັນ ພໍ່, ແມ່ ນັ້ນ **ກ** ແລະ **ຂ** ຈະຕ້ອງໄດ້ປະຕິບັດຄື: ເມື່ອລູກຢູ່ນຳແມ່ **ຂ** ແລ້ວ **ກ** ຜູ້ເປັນ ພໍ່ ຕ້ອງໄດ້ສົ່ງຄ່າລ້ຽງດູໃຫ້ລູກທັງ 2 ໂດຍນຳໃຊ້ວິທີການຄິດໄລ່ຄື ເອົາເງິນເດືອນຂັ້ນຕ່ຳສຸດຂອງພະນັກງານລັດຖະກອນໃນເວລານັ້ນ (ເຊັ່ນ ປີ 2020 ເງິນເດືອນຕ່ຳສຸດຂອງພະນັກງານລັດຖະກອນແມ່ນ 1.100.000 ກີບ) ມາເປັນພື້ນຖານການຄິດໄລ່ ເຊັ່ນ ໃນກໍລະນີ **ກ** ທີ່ເປັນພໍ່ຫາກມີລາຍໄດ້ ຕ່ຳກວ່າ 1.100.000 ກີບ ຊຶ່ງບໍ່ພຽງພໍເປັນຄ່າເບິ່ງແຍງລ້ຽງດູ ລູກທັງ 2 ຄົນ ຜູ້ເປັນພໍ່ນັ້ນກໍມີສິດຮ້ອງຂໍໃຫ້ສານຫຼຸດຜ່ອນຄ່າເບິ່ງແຍງລ້ຽງດູລູກ ເນື່ອງຈາກມີຄວາມຫຍຸ້ງຍາກທາງດ້ານເສດຖະກິດ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງ ມາຈາກມາດຕາ 35 ຂອງກົດໝາຍວ່າດ້ວຍຄອບຄົວ ປີ 2008 ວັກ1 ເວົ້າພຽງແຕ່ລູກທີ່ຮອດອາຍຸກະສຽນ ແຕ່ຫາກຂາດຄວາມສາມາດທາງດ້ານການອອກແຮງງານເທົ່ານັ້ນ ສະນັ້ນ ປະມວນກົດໝາຍແພ່ງ ຈຶ່ງເພີ່ມຕື່ມລູກທີ່ພົ້ນອາຍຸກະສຽນ ແຕ່ເປັນຜູ້ທີ່ບໍ່ມີຄວາມສາມາດທາງດ້ານການປະພຶດໃສ່ນຳໃຫ້ມີຄວາມຄົບຖ້ວນຂຶ້ນຕື່ມ; ວັກທີ 2 ໄດ້ກຳນົດວ່າ ພໍ່ແມ່ ຢູ່ນຳກັນ ຫຼື ຢ່າຮ້າງກັນເທົ່ານັ້ນ ສ່ວນໃນປະມວນກົດໝາຍແພ່ງໄດ້ເພີ່ມຕື່ມໃຫ້ມີ ການແຕ່ງດອງທີ່ເປັນໂມຄະ ໃສ່ຕື່ມພ້ອມທັງໄດ້ປັບປຸງກ່ຽວກັບກຳນົດເວລາໃນການຮ້ອງຟ້ອງຄ່າລ້ຽງດູລູກ ໃນໄລຍະທີ່ລູກບໍ່ທັນພົ້ນກະສຽນອາຍຸ ຊຶ່ງໃນກົດໝາຍເກົ່າບໍ່ໄດ້ກຳນົດ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 766, 877, 752 ແລະ 760 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ
ມາດຕາອ້າງອີງ	ມາດຕາ 164, 179 ແລະ 617 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 218 ພັນທະຂອງລູກໃນການລ້ຽງດູ, ເບິ່ງແຍງ ແລະ ຊ່ວຍເຫຼືອ ພໍ່ ແມ່

ລູກ ມີພັນທະເບິ່ງແຍງລ້ຽງດູ ແລະ ຊ່ວຍເຫຼືອ ພໍ່ ແມ່ ທີ່ເຖົ້າແກ່, ເຈັບເປັນ, ຂາດຄວາມສາມາດອອກແຮງງານ ທີ່ຕ້ອງການຄວາມຊ່ວຍເຫຼືອ. ຄ່າລ້ຽງດູ ພໍ່ ແມ່ ນັ້ນ ໃຫ້ ພໍ່ ແມ່ ແລະ ລູກ ຕົກລົງກັນເອງ. ຖ້າຫາກຕົກລົງກັນບໍ່ໄດ້ແລ້ວ ຈຶ່ງໃຫ້ສານເປັນຜູ້ກຳນົດ ໂດຍອີງໃສ່ຄວາມສາມາດທາງດ້ານເສດຖະກິດຂອງ ລູກ ແລະ ໃຫ້ເປັນແຕ່ລະເດືອນ.

ລູກ ອາດຈະພົ້ນຈາກພັນທະໃນການລ້ຽງດູ ພໍ່ ແມ່ ຂອງຕົນ ຕາມຄຳຕັດສິນຂອງສານ ຖ້າວ່າ ພໍ່ ແມ່ ນັ້ນຫາກມີການກະທຳທີ່ບໍ່ຖືກຕ້ອງ ເຊັ່ນ ການໃຊ້ສິດໃນການເປັນ ພໍ່ ແມ່ ເກີນຂອບເຂດ, ກະທຳຕໍ່ລູກຢ່າງໂຫດຮ້າຍ, ເຮັດສິ່ງຫຍາບຊ້າ ແລະ ບໍ່ຈົບງາມຕໍ່ລູກ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນກ່ຽວກັບເງື່ອນໄຂ ທີ່ພາໃຫ້ເກີດພັນທະ ເບິ່ງແຍງດູແລພໍ່ແມ່, ພັນທະໃນການຈ່າຍເງິນຄ່າລ້ຽງດູ ແລະ ວິທີການກຳນົດຄ່າລ້ຽງດູພໍ່ແມ່. ນອກຈາກນີ້ ຍັງກຳນົດກ່ຽວກັບການພົ້ນຈາກການລ້ຽງດູພໍ່ແມ່ຂອງລູກ.

ຕົວຢ່າງ	1. **ກ** ອາຍຸ 25 ເປັນລູກ **ຂ** ອາຍຸ 65 ປີ ເປັນພໍ່ **ຄ** ອາຍຸ 60 ປີ ເປັນແມ່ ຊຶ່ງທັງສອງບໍ່ສາມາດຊ່ວຍເຫຼືອຕົນເອງໄດ້ ພ້ອມທັງເຈັບເປັນ **ກ** ຜູ້ເປັນລູກ ມີພັນທະເບິ່ງແຍງ ແລະ ຊ່ວຍເຫຼືອ **ຂ** ແລະ **ຄ** ຜູ້ເປັນພໍ່ແມ່. ຖ້າວ່າຜູ້ເປັນພໍ່ແມ່ ຫາກຍັງແຂງແຮງ ສາມາດຊ່ວຍເຫຼືອຕົວເອງໄດ້ນັ້ນ **ກ** ແລະ ພໍ່, ແມ່ ໄດ້ຕົກລົງກັນວ່າໃຫ້ **ກ** ຈ່າຍຄ່າລ້ຽງດູ ໃຫ້ພໍ່ ແມ່ ເປັນເດືອນລະ 1.000.000 ກີບ ເພື່ອເປັນຄ່າລ້ຽງດູໃຫ້ ພໍ່, ແມ່ ກໍພໍແລ້ວ, ຖ້າວ່າ ພໍ່,ແມ່ ຫາກບໍ່ເຫັນດີ ຫຼື ພໍ່ລູກ ບໍ່ສາມາດຕົກລົງກັນໄດ້ນັ້ນ ແມ່ນສະເໜີໃຫ້ຄະນະສານຄອບຄົວ ພິຈາລະນາເພື່ອກຳນົດຄ່າລ້ຽງດູໂດຍສານຈະພິຈາລະນາ ຈາກຄວາມສາມາດທາງດ້ານເສດຖະກິດ ຂອງລູກ ແລະ ໃຫ້ເປັນແຕ່ລະເດືອນ. 2. **ກ** ອາຍຸ 25 ປີ ເປັນລູກ **ຂ** ອາຍຸ 60 ປີ ບໍ່ແຂງແຮງ ແລະ ບໍ່ສາມາດຊ່ວຍເຫຼືອຕົວເອງໄດ້ **ກ** ໄດ້ປະຕິບັດພັນທະ ໃນການເບິ່ງແຍງດູແລ **ຂ** ຜູ້ເປັນພໍ່ ຊຶ່ງໃນແຕ່ລະມື້ **ຂ** ຜູ້ເປັນພໍ່ດື່ມເຫຼົ້າເມົາ ແລະ ທຸບຕີລວມທັງປ້ອຍດ່າ ໃຊ້ຄຳຫຍາບຊ້າແກ່ **ກ** ເປັນປົກກະຕິປະຊາຊົນເຮືອນຂ້າງຄຽງກໍເຫັນມາເປັນເວລາຫຼາຍປີ ຊຶ່ງເປັນການທໍລະມານຈິດໃຈ **ກ** ຢ່າງໜັກໜ່ວງແລ້ວ **ກ** ມີສິດຮ້ອງຂໍຕໍ່ສານປະຊາຊົນເພື່ອໃຫ້ປົດສິດຄວາມເປັນພໍ່ຂອງ **ຂ** ໄດ້ ເມື່ອຄຳຕັດສິນໃຊ້ໄດ້ຢ່າງເດັດຂາດແລ້ວ **ກ** ກໍພົ້ນຈາກພັນທະການລ້ຽງດູພໍ່ ຂອງຕົນຕາມຄຳຕັດສິນຂອງສານ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກມາດຕາ 32 ຂອງກົດໝາຍວ່າດ້ວຍຄອບຄົວ ໃນວັກ 2 ແມ່ນໄດ້ກຳນົດການກະທຳຂອງພໍ່ແມ່ ຫຼື ລູກທີ່ປະຕິບັດໂຫດຮ້າຍ, ຫຍາບຊ້າ ບໍ່ດີຕໍ່ລູກ ຫຼື ພໍ່ແມ່ ກໍຈະຖືກປົດສິດການເປັນພໍ່ແມ່ ຫຼື ລູກ ຊຶ່ງເປັນການກຳນົດລວມໄວ້ ແຕ່ໃນມາດຕາ 36 ຂອງກົດໝາຍສະບັບດຽວກັນວ່າ ລູກອາດຈະພົ້ນພັນທະ ການລ້ຽງດູ ພໍ່ ແມ່ ຖ້າພໍ່ແມ່ມີການກະທຳຕາມມາດຕາ 32 ສະນັ້ນ ປະມວນກົດໝາຍແພ່ງ ຈຶ່ງໄດ້ເອົາທັງສອງມາດຕາທີ່ມີເນື້ອໃນອັນດຽວກັນເຂົ້າມາເປັນມາດຕານີ້ໃນປະມວນກົດໝາຍແພ່ງ "ລູກ" ໃນມາດຕານີ້ແມ່ນໝາຍເຖິງ ລູກທີ່ພົ້ນກະສຽນອາຍຸ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 877 ແລະ 1 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ; ມາດຕາ 70 ແລະ 71 ຂອງກົດໝາຍແຕ່ງດອງ ແລະ ຄອບຄົວ ຫວຽດນາມ 2014
ມາດຕາອ້າງອີງ	ມາດຕາ 220 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 219 ຊັບຂອງ ພໍ່ ແມ່ ແລະ ລູກ

ລູກບໍ່ມີກຳມະສິດ ຕໍ່ຊັບຂອງ ພໍ່ ແມ່ ແລະ ພໍ່ ແມ່ ກໍບໍ່ມີກຳມະສິດ ຕໍ່ຊັບຂອງລູກ ໃນເວລາທີ່ພວກກ່ຽວຍັງມີຊີວິດຢູ່.

ພໍ່ ແມ່ ເປັນຜູ້ມີສິດຄຸ້ມຄອງ ຊັບຂອງເດັກທີ່ຍັງບໍ່ທັນພົ້ນກະສຽນອາຍຸ.

ຈຸດປະສົງ	ເພື່ອກຳນົດເພື່ອໃຫ້ຮູ້ກ່ຽວກັບ ສາຍພົວພັນ ຊັບ ຂອງພໍ່ແມ່ ແລະ ລູກ, ພ້ອມທັງໃຫ້ຮູ້ວ່າ ພໍ່ແມ່ມີສິດຄຸ້ມຄອງຊັບ ຂອງເດັກທີ່ຍັງບໍ່ພົ້ນກະສຽນອາຍຸ.
ຕົວຢ່າງ	1. **ກ** ແລະ **ຂ** ເປັນຜົວເມຍກັນມີລູກນຳກັນ 1 ຄົນ **ຄ** ອາຍຸ 19 ປີ, **ກ** ແລະ **ຂ** ມີສິນສົມສ້າງຮ່ວມກັນຄື ມີເຮືອນໜຶ່ງຫຼັງ, ທີ່ດິນສອງຕອນ, ມີເງິນຝາກທະນາຄານ 100.000.000 ກີບ. ຕໍ່ມາ **ຄ** ຜູ້ເປັນລູກ ໄດ້ຕົດການພະນັນເຮັດໃຫ້ເກີດບັນຫາທາງດ້ານການເງິນ **ຄ** ຈຶ່ງໄດ້ເອົາໃບຕາດິນຂອງ ພໍ່ແມ່ໄປໂອນ ສິດນຳໃຊ້ທີ່ດິນມາເປັນຂອງຕົນ ເພື່ອຈຸດປະສົງ ເອົາທີ່ດິນຕອນດັ່ງກ່າວໄປຂາຍເພື່ອໃຊ້ໜີ້ສິນ ໂດຍອ້າງເຫດຜົນວ່າຕົນເອງເປັນລູກຄົນດຽວຂອງ **ກ** ແລະ **ຂ** ດັ່ງນັ້ນ **ຄ** ຈຶ່ງມີສິດຕໍ່ຊັບທີ່ເປັນຂອງ ພໍ່ແມ່.

	ໃນກໍລະນີນີ້ **ຄ** ຜູ້ເປັນລູກ ຍັງບໍ່ມີສິດຕໍ່ຊັບ ຂອງພໍ່ແມ່ ຖ້າວ່າ ພໍ່ແມ່ຫາກບໍ່ເຫັນດີ. **2. ກ** ແລະ **ຂ** ເປັນຜົວ ເມຍ ກັນມີລູກນຳກັນ 1 ຄົນ **ຄ** ອາຍຸ 25 ປີ ແຕ່ງດອງແລ້ວແຕ່ຍັງອາໃສຢູ່ນຳພໍ່ແມ່, **ຄ** ເປັນພະນັກງານຂອງບໍລິສັດ ມີເງິນເດືອນ 7.000,000 ກີບ ຕໍ່ເດືອນ **ຄ** ໄດ້ຊື້ລົດ 1 ຄັນອອກຊື່ **ຄ,** ຕໍ່ມາ **ກ** ຜູ້ເປັນພໍ່ ໄດ້ຕິດການພະນັນ ເຮັດໃຫ້ເກີດບັນຫາທາງດ້ານການເງິນ **ກ** ຈຶ່ງໄດ້ເອົາລົດ ຂອງ **ຄ** ໄປປະກາດຂາຍໂດຍອ້າງວ່າຕົນເອງເປັນພໍ່ທີ່ເປັນຫົວໜ້າຄອບຄົວ, ດັ່ງນັ້ນຊັບສິ່ງຂອງທຸກຢ່າງທີ່ຢູ່ໃນຄອບຄົວຜູ້ເປັນພໍ່ກໍມີສິດເປັນເຈົ້າຂອງ ຫຼື ຊື້ຂາດຕໍ່ຊັບດັ່ງກ່າວ. ໃນກໍລະນີນີ້ **ກ** ຜູ້ເປັນ ພໍ່ ບໍ່ມີສິດຕໍ່ຊັບຂອງ **ຄ** ຜູ້ເປັນລູກເຖິງ **ຄ** ຍັງອາໃສ ຢູ່ນຳພໍ່ແມ່ກໍຕາມ ຖ້າວ່າ **ຄ** ຜູ້ເປັນລູກຫາກບໍ່ເຫັນດີ. **3. ກ** ແລະ **ຂ** ເປັນຜົວ ເມຍ ກັນມີລູກນຳກັນ 2 ຄົນ ຄື **ຄ** ອາຍຸ 19 ປີ,**ງ** ມີອາຍຸ 14 ປີ, ຄ ແລະ **ງ** ສອງອ້າຍນ້ອງເປັນນັກກີລາ ຕີດອກປົກໄກ່ ໄດ້ໄປຕີຊິງ ລາງວັນເຍົາວະຊົນລຸ້ນອາຍຸບໍ່ເກີນ 15 ປີ ແລະ ລຸ້ນອາຍຸບໍ່ເກີນ 20 ປີ ຊຶ່ງ **ຄ** ແລະ **ງ** ໄດ້ຊະນະເລີດແລ້ວ ໄດ້ເງິນລາງວັນມາຜູ້ລະ 20.000.000 ກີບ, ດັ່ງນັ້ນ **ຄ** ຜູ້ເປັນອ້າຍ ໄດ້ເອົາເງິນລາງວັນ ໄປຊື້ໄດ້ລົດຈັກໄດ້ໜຶ່ງຄັນ ອອກຊື່ **ຄ** ແຕ່ສ່ວນເງິນລາງວັນທີ່ເປັນຂອງ **ງ** ນັ້ນ ພໍ່ແມ່ໄດ້ເອົາໄປເປີດບັນຊີ ທະນາຄານໃຫ້ **ງ** ແລະ ບັນຊີນັ້ນກໍອອກຊື່ **ງ** ແຕ່ພໍ່ແມ່ເປັນຜູ້ຮັກສາປຶ້ມ ບັນຊີທະນາຄານດັ່ງກ່າວໄວ້ໃຫ້ **ງ.**
ເຫດຜົນໃນການປັບປຸງ	ມາດຕານີ້ ປັບປຸງເນື່ອງຈາກວ່າ ມາດຕາ 34 ຂອງກົດໝາຍຄອບຄົວ ປີ 2008 ແມ່ນໄດ້ກ່າວເຖິງກຳມະສິດລວມ ທີ່ກຳນົດໄວ້ໃນກົດໝາຍກຳມະສິດ ປີ 1990 ສະນັ້ນ ປະມວນກົດໝາຍແພ່ງ ແມ່ນໄດ້ລວມເອົາ ກົດໝາຍກຳມະສິດເປັນພາກ ໜຶ່ງ ຂອງປະມວນແພ່ງສະບັບນີ້ ດັ່ງນັ້ນເລື່ອງກຳມະສິດລວມ ຈຶ່ງເປັນມາດຕາ ໜຶ່ງຂອງພາກກຳມະສິດ, ຖ້າຍັງຮັກສາເນື້ອໃນໄວ້ໃນມາດຕານີ້ ມັນກໍຈະ ຊ້ຳຊ້ອນກັນ.ດັ່ງນັ້ນ,ຈຶ່ງເຫັນຄວນຍ້າຍເນື້ອໃນ ໄປໄວ້ໃນໝວດທີ່ກ່ຽວຂ້ອງຂອງ ປະມວນກົດໝາຍແພ່ງ.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງ ຂອງປະເທດອື່ນ	ມາດຕາ 824 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ; ມາດຕາ 75 ກົດໝາຍແຕ່ງດອງ ແລະ ຄອບຄົວ ຫວຽດນາມ 2014.
ມາດຕາອ້າງອີງ	ມາດຕາ 215ຂອງ ປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 220 ການປົດສິດໃນການເປັນ ພໍ່ ແມ່ ແລະ ລູກ

ການປົດສິດ ໃນການເປັນ ພໍ່ ແມ່ ຂອງເດັກ ຫຼື ການປົດສິດໃນການເປັນລູກ ຕາມຄຳສະເໜີຂອງ ແມ່, ພໍ່, ເດັກ, ຍາດໃກ້ຊິດ ຫຼື ຫົວໜ້າອົງການໄອຍະການປະຊາຊົນ ເປັນຜູ້ຮ້ອງຟ້ອງຕໍ່ສານ ຕາມເງື່ອນໄຂທີ່ໄດ້ກຳນົດ ໄວ້ໃນວັກທີສອງ ຂອງມາດຕານີ້.

ຖ້າວ່າ ພໍ່ ແມ່ ຫາກບໍ່ປະຕິບັດພັນທະຂອງຕົນ ໃນການສຶກສາອົບຮົມລູກ, ໃຊ້ສິດໃນການເປັນ ພໍ່ ແມ່ ເກີນຂອບເຂດ, ໃຊ້ການກະທຳຕໍ່ລູກຢ່າງໂຫດຮ້າຍ, ເຮັດສິ່ງຫຍາບຊ້າ ແລະ ບໍ່ຈົບງາມຕໍ່ລູກ ຫຼື ລູກ ຫາກໄດ້ເນລະຄຸນ ເຊັ່ນ ທຳຮ້າຍຮ່າງກາຍ, ບັງຄັບນາບຂູ່ ພໍ່, ແມ່ ແລ້ວ ຜູ້ກ່ຽວກໍຈະຖືກສານປົດສິດໃນການ ເປັນ ພໍ່ ແມ່ ຫຼື ການເປັນລູກ.

ສຳລັບ ພໍ່ ແມ່ ທີ່ຖືກປົດສິດນັ້ນ ກໍຍັງຕ້ອງສືບຕໍ່ປະຕິບັດພັນທະ ໃນການເບິ່ງແຍງລ້ຽງດູເດັກ ຈົນກວ່າພົ້ນກະສຽນອາຍຸ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ ກ່ຽວກັບ ການດຳເນີນການປົດສິດ ຂອງການເປັນ ພໍ່ ແມ່ ແລະ ຜົນສະທ້ອນທາງກົດໝາຍ ໃນກໍລະນີທີ່ ພໍ່ ແມ່ ບໍ່ລ້ຽງດູລູກ ທີ່ຍັງບໍ່ພົ້ນກະສຽນອາຍຸຢ່າງເໝາະສົມ ແລະ ການນຳໃຊ້ສິດເກີນຂອບເຂດຂອງພໍ່ແມ່. ເຮັດໃຫ້ຮູ້ກ່ຽວກັບ ຜົນສະທ້ອນທາງກົດໝາຍ ໃນກໍລະນີທີ່ມີການປະພຶດທີ່ບໍ່ເໝາະສົມ ຂອງລູກ ຕໍ່ ພໍ່ແມ່ ຫຼື ພໍ່ແມ່ ຕໍ່ ລູກ.
ຕົວຢ່າງ	**1. ກ** ແລະ **ຂ** ເປັນຜົວເມຍ, ມີລູກນຳກັນ 1 ຄົນ ຄື **ຄ** ຕາມກົດໝາຍແລ້ວ **ກ** ແລະ **ຂ** ຊຶ່ງໃນຖານະເປັນພໍ່ແມ່ ມີພັນທະຕ້ອງສຶກສາອົບຮົມ ແລະ ລ້ຽງດູ **ຄ** ທີ່ເປັນລູກ ແຕ່ກົງກັນຂ້າມ ຜູ້ເປັນພໍ່ແມ່ ຍັງບໍ່ເອົາໃຈໃສ່ໃນການສຶກສາອົບຮົມ **ຄ** ໃຫ້ເປັນຄົນດີຂອງສັງຄົມ, ແຕ່ໃນຕົວຈິງແລ້ວ **ກ** ແລະ **ຂ** ບໍ່ໄດ້ປະຕິບັດພັນທະ ໃນການເປັນພໍ່ແມ່ຕໍ່ **ຄ,** ຊຶ່ງໃນແຕ່ລະມື້ **ກ** ແລະ **ຂ** ຜູ້ເປັນພໍ່ແມ່ ມັກຈະໃຊ້ຊີວິດຢູ່ກັບວົງເຫຼົ້າ, **ກ** ແລະ **ຂ** ຈະໃຊ້ໃຫ້ **ຄ** ເຮັດວຽກເພື່ອຫາເງິນມາໃຊ້ໃນຄອບຄົວ, ຖ້າວ່າ **ຄ** ຜູ້ເປັນລູກເຮັດວຽກບໍ່ທັນ ຫຼື ຫາເງິນບໍ່ໄດ້ກໍມີແຕ່ດ່າ ແລະ ຕີ **ຄ** ຜູ້ເປັນລູກ ເຮັດໃຫ້ **ຄ** ຜູ້ເປັນລູກບໍ່ມີໂອກາດໄດ້ເຂົ້າໂຮງຮຽນ. ເມື່ອເປັນແນວນັ້ນ ຍາດໃກ້ຊິດຂອງ **ກ** ຈຶ່ງໄດ້ຮ້ອງຟ້ອງໄປຍັງສານ ເພື່ອພິຈາລະນາປົດສິດຂອງ **ກ** ແລະ **ຂ** ອອກຈາກການເປັນພໍ່ແມ່ຂອງ **ຄ** ຊຶ່ງໃນເວລາທີ່ ສານໄດ້ພິຈາລະນາປົດສິດ ຂອງ **ກ** ແລະ **ຂ** ອອກຈາກການເປັນພໍ່ແມ່ນັ້ນ **ຄ** ກໍຍັງໄດ້ອາໃສຢູ່ນຳ ພໍ່ ແມ່ ເພື່ອລໍຖ້າ ການແຕ່ງຕັ້ງຜູ້ປົກຄອງເດັກ ຕາມມາດຕາ 222 ຂອງ ປະມວນກົດໝາຍແພ່ງ, ແຕ່ **ກ** ກັບ **ຂ** ຈະບໍ່ສາມາດນຳໃຊ້ສິດຄວາມເປັນ ພໍ່ ແມ່ ກັບ **ຄ** ໄດ້, ແຕ່ພັນທະໃນການລ້ຽງດູນັ້ນ **ກ** ແລະ **ຂ** ກໍຍັງສືບຕໍ່ ປະຕິບັດຢູ່. ເມື່ອສິດຄວາມເປັນພໍ່ຖືກຕັດແລ້ວ, **ກ** ແລະ **ຂ** ຜູ້ເປັນພໍ່ ແມ່ ກໍຈະເສຍສິດໃນການສືບທອດມູນມໍຣະດົກຂອງ **ຄ** ຕາມມາດຕາ 617. **2. ກ** ແລະ **ຂ** ເປັນຜົວເມຍ, ມີລູກນຳກັນ 1 ຄົນ ຄື **ຄ**, **ກ** ແລະ **ຂ** ໄດ້ເຮັດໜ້າທີ່ສຶກສາອົບຮົມ ແລະ ລ້ຽງດູ **ຄ** ເປັນຢ່າງດີ, ເມື່ອ **ຄ** ອາຍຸ 30 ໄດ້ແຕ່ງດອງມີຄອບຄົວ ມີຖານະທາງເສດຖະກິດຄອບຄົວດີ, ຕໍ່ **ຄ** ບໍ່ໄດ້ເຮັດໜ້າທີ່ເບິ່ງແຍງລ້ຽງດູຜູ້ເປັນພໍ່ແມ່ຄື **ກ** ແລະ **ຂ , ຄ** ທຳຮ້າຍຮ່າງກາຍ ແລະ ໄດ້ບັງຂັບນາບຂູ່ໃຫ້ **ກ** ແລະ **ຄ** ຕ້ອງຍົກຊັບ ທີ່ເປັນກຳມະສິດຂອງ **ກ** ແລະ **ຂ** ໃຫ້ແກ່ຕົນ, **ສ** ຜູ້ເປັນປ້າຂອງ **ກ** ຈຶ່ງໄດ້ສະເໜີ ແລະ ຮ້ອງຟ້ອງໄປຍັງ ສານປະຊາຊົນ ເພື່ອພິຈາລະນາປົດສິດຂອງ **ຄ** ອອກຈາກ ການເປັນລູກຂອງ **ກ** ແລະ **ຂ** .
ເຫດຜົນໃນການປັບປຸງ	ມາດຕານີ້ໄດ້ປັບປຸງມາຈາກ ມາດຕາ 32 ກົດໝາຍວ່າດ້ວຍ ຄອບຄົວ ປີ 2008 ວັກ 2 ແລະ 3, ແລະ ມາດຕາ 49 ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ປີ 2012 ເພື່ອລວບລວມເອົາຈາກຫຼາຍກົດໝາຍ ທີ່ກ່ຽວຂ້ອງມາເປັນມາດຕາດຽວ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 834, 834/2 ແລະ 892 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ; ມາດຕາ 85, 86 ແລະ 87 ຂອງກົດໝາຍແຕ່ງດອງ ແລະ ຄອບຄົວ ຫວຽດນາມ 2014.
ມາດຕາອ້າງອີງ	ມາດຕາ 49 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ປີ 2012; ມາດຕາ 221, 218,221 ແລະ 617 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ. ກ່ຽວກັບເມື່ອປົດສິດ ຄວາມເປັນພໍ່ແມ່ ກໍຈະໃຫ້ລູກທີ່ຖືກທຳຮ້າຍຮ່າງກາຍ ກັບ ພໍ່ແມ່ ທີ່ໄປທຳຮ້າຍຮ່າງກາຍ ຫ່າງອອກກັນນັ້ນ ແມ່ນບໍ່ໄດ້ກຳນົດໄວ້ໃນມາດຕາກົດໝາຍ.

ມາດຕາ 221 ການຄືນສິດໃນການເປັນ ພໍ່ ແມ່ ແລະ ລູກ

ໃນກໍລະນີ ທີ່ ພໍ່ ແມ່ ຫຼື ລູກ ຊຶ່ງໄດ້ຖືກປົດສິດແລ້ວນັ້ນ ຫາກໄດ້ສ້າງຕົນດີຂຶ້ນ ສານກໍອາດຈະຄືນສິດ ໃນການເປັນ ພໍ່ ແມ່ ຫຼື ລູກ ຕາມການຮ້ອງຂໍຂອງຜູ້ກ່ຽວ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ວ່າ ຫາກມີການປົດສິດ ໃນການເປັນພໍ່ແມ່ ແລະ ລູກ ຕາມ ຄຳຕັດສິນຂອງສານແລ້ວ ແຕ່ຖ້າວ່າພໍ່ແມ່ ຫຼື ລູກທີ່ໄດ້ຖືກສານປົດສິດໄປແລ້ວ ນັ້ນຫາກມີການປະພຶດທີ່ດີ ເຊັ່ນ ຜູ້ກ່ຽວໄດ້ກັບຕົວກັບໃຈ ມາປະພຶດຕົວດີໂດຍ ປະຕິບັດພັນໃນການດູແລ ແລະ ເບິ່ງແຍ່ງຕໍ່ຜູ້ທີ່ໄດ້ຮ້ອງຟ້ອງຕົນນັ້ນແລ້ວ, ຜູ້ຖືກ ສານຕັດສິນປົດສິດນັ້ນ ກໍມີສິດຮ້ອງຂໍຕໍ່ສານໃຫ້ລົບລ້າງຄຳຕັດສິນດັ່ງ ກ່າວ ເພື່ອຄືນສິດ ເປັນພໍ່ແມ່ ແລະ ລູກກັບຄືນມາ.
ຕົວຢ່າງ	**1. ກ** ມີອາຍຸ 19 ປີ ເປັນລູກຂອງ **ຂ** ແລະ **ຄ** ຊຶ່ງຜູ້ກ່ຽວ ຢາກໄດ້ເມຍ ກໍເລີຍໄປຂໍເງິນນຳ **ຂ** ແລະ **ຄ** ຜູ້ເປັນພໍ່ແມ່ ເພື່ອມາແຕ່ງເມຍ, ແຕ່ພໍ່ແມ່ ຍັງບໍ່ທັນພ້ອມເນື່ອງຈາກ ບໍ່ມີເງິນ **ກ** ກໍເລີຍໃຊ້ຄວາມຮຸນແຮງ ດ້ວຍການ ຕີພໍ່ແມ່ ເພື່ອບັງຄັບໃຫ້ໄປຂາຍດິນ ແລະ ເຮືອນ ເພື່ອເອົາເງິນມາໃຫ້ຜູ້ ກ່ຽວໄປຂໍເມຍ ໃນກໍລະນີແບບນີ້ **ຂ** ແລະ **ຄ** ສາມາດໄປຮ້ອງຟ້ອງຕໍ່ສານ ເພື່ອປົດສິດການເປັນພໍ່ແມ່ ແລະ ລູກ ໄດ້. ເມື່ອມີຄຳຕັດສິນໃນການປົດສິດ ການເປັນພໍ່ແມ່ ແລະ ລູກ ແລ້ວ. ຕໍ່ມາ **ກ** ຜູ້ເປັນລູກ ຮູ້ສຶກກິນແໜງແຄງໃຈ ທີ່ປະພຶດຕໍ່ ພໍ່ແມ່ ແບບນັ້ນ ແລະ ຮູ້ເຖິງບຸນຄຸນ ຂອງພໍ່ແມ່ ທີ່ລ້ຽງດູ ຜູ້ກ່ຽວມາຈົນໃຫຍ່ ກໍເລີຍກັບຕົວກັບໃຈມາເອົາໃຈໃສ່ເບິ່ງແຍງພໍ່ແມ່ຢ່າງ ຈິງຈັງ ເມື່ອເປັນເຊັ່ນນັ້ນ ຕາມມາດຕານີ້ ຜູ້ກ່ຽວແມ່ນມີສິດຮ້ອງຂໍຕໍ່ສານ ເພື່ອຂໍລົບລ້າງຄຳຕັດສິນ ກ່ຽວກັບການປົດສິດ ໃນການເປັນພໍ່ແມ່ ເພື່ອຄືນ ສິດການເປັນພໍ່ແມ່ ແລະ ລູກ ກັບມາຄືນ. **2. ກ** ແລະ **ຂ** ມີລູກຊື່ **ຄ** ອາຍຸ 16 ປີ (ເປັນເດັກຍິງ), **ກ** ແລະ **ຂ** ບໍ່ມີວຽກເຮັດ, ບໍ່ມີລາຍໄດ້ເພື່ອມາໃຊ້ຈ່າຍໃນຄອບຄົວ ຈຶ່ງເຮັດໃຫ້ **ຄ** ຜູ້ ເປັນລູກບໍ່ມີໂອກາດໄດ້ຮັບການສຶກສາ, ນອກນັ້ນຍັງບັງຄັບໃຫ້ **ຄ** ຜູ້ເປັນລູກ ໄປເຮັດວຽກເພື່ອຫາເງິນມາລ້ຽງພໍ່ແມ່ ຊຶ່ງວຽກງານກໍເປັນວຽກກ່ຽວກັບ ການບໍລິການທາງເພດ ອັນເຮັດໃຫ້ **ຄ** ຜູ້ເປັນລູກມີຄວາມອັບອາຍ ເມື່ອເປັນເຊັ່ນນັ້ນ **ງ** ທີ່ເປັນນ້ອງຊາຍຂອງ **ກ** ຈຶ່ງໄດ້ທຳການຮ້ອງຂໍ ຕໍ່ສານ ເພື່ອປົດສິດຄວາມເປັນພໍ່ແມ່ ຂອງລູກ, ພາຍຫຼັງທີ່ສານໄດ້ພິຈາລະນາ ປົດສິດການເປັນ ພໍ່ແມ່ ແລ້ວ ນາຍບ້ານໄດ້ແຕ່ງຕັ້ງໃຫ້ **ງ** ຜູ້ເປັນອາວ ມາເປັນຜູ້ປົກຄອງຂອງ **ຄ,** ແຕ່ **ກ** ແລະ **ຂ** ຍັງມີພັນທະສືບຕໍ່ໃນການລ້ຽງດູ **ຄ** ຢູ່ ເນື່ອງຈາກວ່າ **ຄ** ອາຍຸຍັງບໍ່ທັນພົ້ນກະສຽນເທື່ອ. ຕໍ່ມາ **ກ** ແລະ **ຂ** ຮູ້ສຶກກິນແໜງແຄງໃຈ ທີ່ໄດ້ປະພຶດຕໍ່ ລູກ ຄືແນວນັ້ນ ຈຶ່ງໄດ້ ໄປຊອກວຽກເຮັດ, ມີອາຊີບ, ມີລາຍໄດ້ດີ ຄອບຄົວກໍໄດ້ມີການປ່ຽນແປງ **ກ** ແລະ **ຂ** ມີການປະພຶດຕົວດີຂຶ້ນ ດັ່ງນັ້ນ **ກ** ແລະ **ຂ** ຈຶ່ງຂໍສະເໜີໄປ ຫາສານປະຊາຊົນ ເພື່ອຂໍລົບລ້າງຄຳຕັດສິນກ່ຽວກັບການປົດສິດການເປັນ ພໍ່ແມ່ ແລະ ລູກ ແລ້ວໃຫ້ສານຕັດສິນ ຄືນສິດໃນການເປັນພໍ່ແມ່ ແລະ ລູກກັບຄືນມາໃໝ່.
ເຫດຜົນໃນການຮັກສາເດີມ	ມາດຕານີ້ແມ່ນຮັກສາເນື້ອໃນວັກ 4 ມາດຕາ 32 ຂອງກົດໝາຍວ່າດ້ວຍຄອບຄົວ ປີ 2008.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງ ຂອງປະເທດອື່ນ	ມາດຕາ 836 ແລະ 894 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 220 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ໝວດທີ 9
ການແຕ່ງຕັ້ງຜູ້ປົກຄອງເດັກ

ມາດຕາ 222 ວິທີການແຕ່ງຕັ້ງຜູ້ປົກຄອງເດັກ

ພາຍຫຼັງທີ່ໄດ້ຮັບແຈ້ງກ່ຽວກັບເດັກ ຊຶ່ງຂາດການເບິ່ງແຍງຈາກ ພໍ່ ແມ່ ທີ່ໄດ້ເສຍຊີວິດ, ໄດ້ຖືກປົດສິດ ໃນການເປັນ ພໍ່ ແມ່, ເຈັບເປັນ ຫຼື ຍ້ອນສາເຫດອື່ນ ນາຍບ້ານ ຕ້ອງແຕ່ງຕັ້ງຜູ້ປົກຄອງເດັກ ຢ່າງຊ້າພາຍ ໃນໜຶ່ງເດືອນ ໂດຍໃຫ້ເລືອກເອົາຈາກຍາດພີ່ນ້ອງໃກ້ຊິດຂອງເດັກ.

ໃນກໍລະນີທີ່ຍາດໃກ້ຊິດ ຫາກບໍ່ຮັບເປັນຜູ້ປົກຄອງ ຫຼື ຍາດໃກ້ຊິດ ມີພຶດຕິກຳໃດໜຶ່ງ ທີ່ຂັດກັບຜົນ ປະໂຫຍດຂອງເດັກ ນາຍບ້ານ ຕ້ອງສະເໜີຕໍ່ສານເປັນຜູ້ພິຈາລະນາຕັດສິນແຕ່ງຕັ້ງ ຜູ້ອື່ນເປັນຜູ້ປົກຄອງ ເດັກ.

ນາຍບ້ານ ມີໜ້າທີ່ປະຕິບັດການກວດກາການເຄື່ອນໄຫວ ຂອງຜູ້ປົກຄອງນັ້ນຢ່າງເປັນປະຈຳ.

ຜູ້ບໍ່ພົ້ນກະສຽນອາຍຸ, ຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດ, ຜູ້ທີ່ຖືກປົດສິດ ໃນການເປັນ ພໍ່ ແມ່ ຫຼື ຜູ້ທີ່ມີການປະພຶດບໍ່ເໝາະສົມ ບໍ່ສາມາດແຕ່ງຕັ້ງມາເປັນຜູ້ປົກຄອງເດັກໄດ້.

ຈຸດປະສົງ	ເພື່ອຢາກໃຫ້ຮູ້ເຖິງ ຮູບການ, ເງື່ອນໄຂຂອງການເປັນຜູ້ປົກຄອງເດັກ ນອກນັ້ນ ແລ້ວຍັງໄດ້ກຳນົດ ກ່ຽວກັບພັນທະ ຂອງນາຍບ້ານນຳ.
ຕົວຢ່າງ	**ກ** ແລະ **ຂ** ເປັນ ຜົວ ເມຍ ກັນມີລູກນຳກັນ 1 ຄົນ **ຄ** ມີອາຍຸ 10 ປີ **ກ** ແລະ **ຂ** ໄດ້ເສຍຊີວິດທັງຄູ່ ຍ້ອນອຸບປະຕິເຫດ ເຮັດໃຫ້ **ຄ** ຂາດຜູ້ລ້ຽງດູ, ດັ່ງນັ້ນ, ພາຍໃນ ໜຶ່ງເດືອນ ນາຍບ້ານຈຶ່ງໄດ້ແຕ່ງຕັ້ງໃຫ້ **ງ** ຜູ້ເປັນອາວ ທີ່ເປັນນ້ອງຊາຍຂອງ **ກ** ມາເປັນຜູ້ປົກຄອງ **ຄ , ງ** ໄດ້ເປັນຜູ້ປົກຄອງ **ຄ** ຕາມການແຕ່ງຕັ້ງ ຂອງນາຍບ້ານ ມາໄລຍະໜຶ່ງເຫັນວ່າ **ງ** ບໍ່ມີເງື່ອນໄຂ ທີ່ຈະສະມາດເປັນຜູ້ປົກຄອງເດັກໄດ້ ຍ້ອນ **ງ** ເປັນຄົນຕິດການພະນັນ ແລະ **ງ** ກໍໄດ້ສວຍໂອກາດເອົາຊັບຂອງ **ຄ** ທີ່ໄດ້ ມາຈາກການສືບທອດມູນ ຂອງພໍ່ແມ່ ນັ້ນໄປຂາຍເພື່ອຫຼົ້ນການພະນັນ ຫຼື ໃຊ້ ແທນ ໜີ້ສິນສ່ວນຕົວຂອງ **ງ** ເອງ, ດັ່ງນັ້ນ ນາຍບ້ານຈຶ່ງໃຫ້ແຕ່ງຕັ້ງ **ຈ** ເປັນຜູ້ປົກຄອງຂອງ **ຄ** ເຊິ່ງຖືກຕາມເງື່ອນໄຂ ທີ່ໄດ້ກຳນົດໃນ ມາດຕາ 222 ວັກ 4 ຂອງປະມວນກົດໝາຍແພ່ງ.
ເຫດຜົນໃນການປັບປຸງ	ມາດຕານີ້ ປັບປຸງມາຈາກມາດຕາ 43 ແລະ ມາດຕາ 44 ຂອງກົດໝາຍວ່າດ້ວຍ ຄອບຄົວ 2008 ຊຶ່ງປັບປຸງວັກທີ 2 ຂອງມາດຕານີ້ ຕື່ມຄຳສັບໃສ່ເພື່ອໃຫ້ຊັດ ເຈນຂຶ້ນຕື່ມໂດຍ ການຄຳນຶງເຖິງ ຜົນປະໂຫຍດຂອງເດັກມາກ່ອນ.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງ ຂອງປະເທດອື່ນ	ມາດຕາ 838, 840, 841, 843, 847, 848, 849 ແລະ 850 ຂອງປະມວນກົດ ໝາຍແພ່ງຍີ່ປຸ່ນ; ມາດຕາ 47 ແລະ 49 ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2015
ມາດຕາອ້າງອີງ	ມາດຕາ 223 ແລະ 226 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 223 ສິດ ແລະ ພັນທະຂອງຜູ້ປົກຄອງເດັກ

ຜູ້ປົກຄອງເດັກ ມີພັນທະລ້ຽງດູ, ສຶກສາອົບຮົມ, ເອົາໃຈໃສ່ຕໍ່ ສຸຂະພາບ, ການຮ່ຳຮຽນ ແລະ ປົກ ປ້ອງສິດ ແລະ ຜົນປະໂຫຍດຂອງເດັກ.

ຜູ້ປົກຄອງເດັກ ມີສິດເປັນຜູ້ຕາງໜ້າຂອງເດັກ ໃນການເຮັດສັນຍາ ແລະ ໃນການເຄື່ອນໄຫວຕ່າງໆ.

ຈຸດປະສົງ	ເພື່ອກຳນົດ ສິດ ແລະ ພັນທະ ຂອງຜູ້ປົກຄອງເດັກ.

ຕົວຢ່າງ	**ກ** ໄດ້ຖືກສານຕັດສິນແຕ່ງຕັ້ງໃຫ້ເປັນຜູ້ປົກຄອງຂອງ **ຄ** ທີ່ຍັງທັນພົ້ນກະສຽນອາຍຸ ມາດຕາ 222 ວັກ 1 ຂອງປະມວນກົດໝາຍແພ່ງ, ດັ່ງນັ້ນ **ກ** ມີພັນທະໃນການເບິ່ງແຍງລ້ຽງດູ **ຄ** ສຶກສາອົບຮົມ ແລະ ສົ່ງເສີມໃຫ້ **ຄ** ມີການສຶກສາ, ນອກນີ້ **ກ** ຍັງຈະຕ້ອງໄດ້ປົກປັກຮັກສາຊັບສິນຂອງ **ຄ** ທີ່ໄດ້ມາຈາກການສືບທອດມູນມໍຣະດົກ ແລະ **ກ** ມີສິດເອົາຊັບທີ່ເຫັນວ່າມີຄວາມຫຍຸ້ງຍາກໃນການຮັກສານັ້ນໄປຂາຍ ແລ້ວນຳເອົາເງິນ ທີ່ໄດ້ມາຈາກການຂາຍຊັບນັ້ນໄປເປີດບັນຊີເງິນຝາກທະນາຄານໃຫ້ **ຄ** ເພາະວ່າ **ກ** ມີພັນທະປົກປ້ອງຜົນປະ�โยດຂອງ **ຄ.**
ເຫດຜົນໃນການປັບປຸງ	ມາດຕານີ້ໄດ້ປັບປຸງມາຈາກ ມາດຕາ 45 ກົດໝາຍວ່າດ້ວຍຄອບຄົວ ປີ 2008 ໂດຍໄດ້ມີການສັບປ່ຽນວັກ ໂດຍເອົາພັນທະຂຶ້ນກ່ອນ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 857, 858 ແລະ 859 ຂອງປະມວນກົດໝາຍແພ່ງ ຍີ່ປຸ່ນ; ມາດຕາ 55, 56 ແລະ 58 ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2015.
ມາດຕາອ້າງອີງ	ມາດຕາ 487 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 224 ການຂໍຖອນ ຫຼື ປ່ຽນຜູ້ປົກຄອງເດັກ

ເມື່ອເຫັນວ່າ ຜູ້ປົກຄອງເດັກ ຫາກມີການປະພຶດບໍ່ດີ, ບໍ່ມີຄວາມສາມາດໃນການປະຕິບັດໜ້າທີ່ ຫຼື ພັນທະຂອງຕົນໄດ້ຢ່າງເໝາະສົມແລ້ວ ອາດຖືກຖອນ ຫຼື ປ່ຽນຜູ້ປົກຄອງກໍໄດ້ ຕາມການຕັດສິນຂອງສານ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນ ການຖອນ ຫຼື ປ່ຽນຜູ້ປົກຄອງເດັກ ທີ່ມີການປະພຶດບໍ່ດີ ຕາມຄຳຕັດສິນຂອງສານ.
ຕົວຢ່າງ	**ກ** ໄດ້ຖືກສານຕັດສິນແຕ່ງຕັ້ງໃຫ້ເປັນຜູ້ປົກຄອງຂອງ **ຄ** ທີ່ຍັງບໍ່ທັນພົ້ນກະສຽນອາຍຸ ມາດຕາ 222 ວັກ 1 ຂອງປະມວນກົດໝາຍແພ່ງ, ມາດຕາ 223 ແລ້ວ **ກ** ມີພັນທະໃນການເບິ່ງແຍງລ້ຽງດູ **ຄ** ສຶກສາອົບຮົມ ແລະ ສົ່ງເສີມໃຫ້ **ຄ** ມີການສຶກສາ, ແລະ ປົກປັກຮັກສາຜົນປະ�โยດຂອງ **ຄ.** ແຕ່ວ່າ **ກ** ບໍ່ໄດ້ປະຕິບັດພັນທະໃນການລ້ຽງດູ ແລະ ສຶກສາອົບຮົມ **ຄ,** ບໍ່ໄດ້ ສົ່ງເສີມໃຫ້ **ຄ** ໄດ້ມີໂອກາດເຂົ້າໂຮງຮຽນ, ນອກນັ້ນ **ກ** ຍັງສວຍໂອກາດເອົາຊັບສິນຂອງ **ຄ** ທີ່ໄດ້ມາຈາກການສືບທອດມູນມໍຣະດົກ ນັ້ນໄປຂາຍເພື່ອມາໃຊ້ຈ່າຍສ່ວນຕົວ, ເມື່ອນາຍບ້ານເຫັນວ່າ **ກ** ບໍ່ມີຄວາມເໝາະສົມທີ່ຈະເປັນຜູ້ປົກຄອງເດັກ ຈຶ່ງໄດ້ສະເໜີຕໍ່ສານ ເພື່ອພິຈາລະນາຕັດສິນຖອນ **ກ** ອອກຈາກການເປັນຜູ້ປົກຄອງຂອງ **ຄ** ຕາມມາດຕາ 224 ຂອງປະມວນກົດໝາຍແພ່ງ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 46 ຂອງກົດໝາຍວ່າດ້ວຍຄອບຄົວ ປີ 2008 ຊຶ່ງໄດ້ແບ່ງອອກເປັນສອງມາດຕາ ໃນປະມວນກົດໝາຍແພ່ງ ຄືມາດຕາ 224 ແລະ 225 ເພື່ອຢາກໃຫ້ເຂົ້າໃຈຊັດເຈນຂຶ້ນຕື່ມ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 844 ແລະ 846 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ; ມາດຕາ 60 ແລະ 61 ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2015.
ມາດຕາອ້າງອີງ	ມາດຕາ 222 ວັກ 2 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	1. ມາດຕານີ້ ບໍ່ໄດ້ກຳນົດວ່າ ຜູ້ທີ່ມີສິດຂໍຖອນແມ່ນໃຜ ສະນັ້ນ ຈຳເປັນຕ້ອງເຮັດໃຫ້ຈະແจ້ງ. ຖ້າເປັນມາດຕາ 222 ສຳລັບການແຕ່ງຕັ້ງແມ່ນ ນາຍບ້ານເປັນຜູ້ແຕ່ງຕັ້ງ ແລະ ເປັນຜູ້ສະເໜີແຕ່ງຕັ້ງ. 2. ສືບຕໍ່ຄົ້ນຄວ້າ.ກວດກາເບິ່ງວ່າ ມີແຕ່ກໍລະນີບໍ່ປະຕິບັດພັນທະບໍ່ຈຶ່ງສາມາດຂໍຖອນ, ຜູ້ປົກຄອງຂໍຖອນຕົວເອງໄດ້ບໍ່ (ສົມທຽບກັບ ຂໍ້ 5 ມາດຕາ 81 ປະມວນກົດໝາຍແພ່ງ)

ມາດຕາ 225 ການສິ້ນສຸດການປົກຄອງເດັກ

ການປົກຄອງເດັກ ຈະສິ້ນສຸດລົງ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ເມື່ອເດັກຫາກໄດ້ພົ້ນກະສຽນອາຍຸແລ້ວ;
2. ຜູ້ປົກຄອງເດັກເສຍຊີວິດ;
3. ຜູ້ປົກຄອງເດັກ ເສຍຄວາມສາມາດທາງດ້ານການປະພຶດ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນເຖິງ ການສິ້ນສຸດສິດ ແລະ ພັນທະຂອງຜູ້ປົກຄອງ.
ຕົວຢ່າງ	**1.** **ກ** ເປັນຜູ້ປົກຄອງຂອງ **ຄ** ທີ່ຍັງບໍ່ທັນພົ້ນກະສຽນອາຍຸ ຕາມມາດຕາ 222 ວັກ 1 ຂອງປະມວນກົດໝາຍແພ່ງ, **ກ** ໄດ້ປະຕິບັດພັນທະ ໃນການເບິ່ງແຍງລ້ຽງດູ **ຄ** ສຶກສາອົບຮົມ, ສົ່ງເສີມໃຫ້ **ຄ** ມີການສຶກສາ, ແລະ ໄດ້ປົກປັກຮັກສາຊັບສິນ ແລະ ຜົນປະໂຫຍດອື່ນໆ ຂອງ **ຄ** ມາຕັ້ງແຕ່ **ຄ** ມີອາຍຸ 10 ປີມາເຖິງປະຈຸບັນ **ຄ** ມີອາຍຸ 18 ປີ ແລະ **ຄ** ມີສຸຂະພາບແຂງແຮງດີ ດັ່ງນັ້ນ **ກ** ໄດ້ສິ້ນສຸດການເປັນຜູ້ປົກຄອງ ຂອງ **ຄ** ມັບແຕ່ມື້ທີ່ **ຄ** ໄດ້ມີອາຍຸ 18 ເປັນຕົ້ນໄປ. **2.** **ກ** ເປັນຜູ້ປົກຄອງ ຂອງ **ຄ** ອາຍຸ 10 ປີ ຊຶ່ງ **ກ** ໄດ້ເຮັດໜ້າທີ່ໃນການເບິ່ງແຍງລ້ຽງດູ, ສຶກສາອົບຮົມ ແລະ ສົ່ງເສີມໃຫ້ **ຄ** ມີການສຶກສາມາໂດຍຕະຫຼອດ ຕໍ່ມາ **ກ** ໄດ້ເສຍຊີວິດ ດັ່ງນັ້ນ ຈຶ່ງເປັນເຫດພາໃຫ້ການເປັນຜູ້ປົກຄອງ ຂອງ **ຄ** ສິ້ນສຸດລົງເມື່ອ **ກ** ໄດ້ເສຍຊີວິດ. **3.** **ກ** ເປັນຜູ້ປົກຄອງຂອງ **ຄ** ອາຍຸ 10 ປີ **ກ** ໄດ້ເຮັດໜ້າທີ່ໃນການເບິ່ງແຍງລ້ຽງດູ, ສຶກສາອົບຮົມ ແລະ ສົ່ງເສີມໃຫ້ **ຄ** ມີການສຶກສາມາໂດຍຕະຫຼອດ. ຕໍ່ມາ **ກ** ໄດ້ເກີດອຸປະຕິເຫດເຮັດໃຫ້ **ກ** ໄດ້ກາຍເປັນບຸກຄົນທີ່ເສຍຄວາມສາມາດທາງດ້ານການປະພຶດ. ດັ່ງນັ້ນການເປັນຜູ້ປົກຄອງຂອງ **ຄ** ກໍຈະສິ້ນສຸດລົງ ເມື່ອໄດ້ມີການຢັ້ງຢືນຈາກແພດວ່າ **ກ** ເປັນຜູ້ທີ່ບໍ່ມີຄວາມສາມາດທາງດ້ານການປະພຶດ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 46 ກົດໝາຍວ່າດ້ວຍຄອບຄົວ ປີ 2008 ຊຶ່ງໄດ້ແບ່ງອອກເປັນສອງມາດຕາໃນປະມວນກົດໝາຍແພ່ງ ຄືມາດຕາ 224 ແລະ 225 ເພື່ອຢາກໃຫ້ເຂົ້າໃຈຊັດເຈນຂຶ້ນຕື່ມ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 870, 844, 846 ແລະ 847 ຂອງປະມວນກົດໝາຍແພ່ງ ຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 226 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 226 ເງື່ອນໄຂ, ການສິ້ນສຸດ ແລະ ຜົນຂອງການສິ້ນສຸດ ການປົກຄອງເດັກ

ເງື່ອນໄຂ, ການສິ້ນສຸດ ແລະ ຜົນຂອງການສິ້ນສຸດ ການປົກຄອງ ສາມາດປະຕິບັດຕາມມາດຕາ 79, 83 ແລະ 84 ຂອງປະມວນກົດໝາຍສະບັບນີ້ ຕາມແຕ່ລະກໍລະນີ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ ສຳລັບການປົກຄອງເດັກທີ່ຍັງບໍ່ພົ້ນກະສຽນອາຍຸ ມາດຕາທີ່ຄວນອີງໃສ່ ແມ່ນມາດຕາທີ່ຢູ່ໃນການຄຸ້ມຄອງຜູ້ຖືກຈຳກັດ ຫຼື ຜູ້ເສຍຄວາມສາມາດໃນການປະພຶດ.

ຕົວຢ່າງ	**1. ຄ** ເປັນເດັກອາຍຸ 12 ປີ ພໍ່ແມ່ໄດ້ເສຍຊີວິດຍ້ອນເກີດອຸບປະຕິເຫດລົດຕົກເຫວ ຍາດພີ່ນ້ອງຈຶ່ງຮ້ອງຂໍໃຫ້ນາຍບ້ານທີ່ **ຄ** ອາໃສຢູ່ແຕ່ງຕັ້ງ **ກ** ຊຶ່ງເປັນນ້າສາວເປັນຜູ້ປົກຄອງຂອງ **ຄ.** ໃນການແຕ່ງຕັ້ງຜູ້ປົກຄອງຕ້ອງມີເງື່ອນໄຂຄື: **ກ** ຕ້ອງມີອາຍຸ 18 ປີຂຶ້ນໄປ, ບໍ່ເປັນບ້າເສຍຈິດ, ບໍ່ເປັນຜູ້ຖືກສານຕັດສິນຕັດອິດສະຫຼະພາບ ຈາກການກະທຳຜິດທາງອາຍາໂດຍເຈດຕະນາ, ບໍ່ເປັນບຸກຄົນລົ້ມລະລາຍ ແລະ ບໍ່ຖືກຫ້າມເປັນຜູ້ປົກຄອງມາກ່ອນ. **ກ** ເມື່ອໄດ້ຮັບການແຕ່ງຕັ້ງແລ້ວມີພັນທະເບິ່ງແຍງລ້ຽງດູ, ສຶກສາອົບຮົມ, ເອົາໃຈໃສ່ຕໍ່ສຸຂະພາບ, ການສຶກສາຮ່ຳຮຽນ ແລະ ປົກປ້ອງສິດຜົນປະ�โยດຂອງເດັກ ຈົນກວ່າ **ຄ** ມີອາຍຸຮອດ 18 ປີ ແລ້ວ **ກ** ຈຶ່ງສິ້ນສຸດການເປັນຜູ້ປົກຄອງເດັກ. **2. ກ** ໄດ້ຖືກສານຕັດສິນແຕ່ງຕັ້ງ ໃຫ້ເປັນຜູ້ປົກຄອງຂອງ **ຄ** ອາຍຸ 10 ປີ ຊຶ່ງ **ກ** ໄດ້ເຮັດໜ້າທີ່ໃນການເບິ່ງແຍງ ລ້ຽງດູ, ສຶກສາອົບຮົມ ແລະ ສົ່ງເສີມໃຫ້ **ຄ** ມີການສຶກສາມາໂດຍຕະຫຼອດ. ຕໍ່ມາ **ຄ** ໄດ້ເສຍຊີວິດ, ດັ່ງນັ້ນ ຈຶ່ງເປັນເຫດພາໃຫ້ **ກ** ສິ້ນສຸດຈາກການເປັນຜູ້ປົກຄອງເມື່ອ **ຄ** ທີ່ເປັນເດັກໄດ້ເສຍຊີວິດ. **3. ກ** ໄດ້ຖືກສານຕັດສິນ ແຕ່ງຕັ້ງໃຫ້ເປັນຜູ້ປົກຄອງຂອງ **ຄ** ອາຍຸ 10 ປີ ຊຶ່ງ **ກ** ໄດ້ເຮັດໜ້າທີ່ໃນການເບິ່ງແຍງ ລ້ຽງດູ, ສຶກສາອົບຮົມ ແລະ ສົ່ງເສີມໃຫ້ **ຄ** ມີການສຶກສາມາໂດຍຕະຫຼອດ, ເມື່ອ **ຄ** ມີອາຍຸຮອດ 18 ປີ ແລ້ວ ການເປັນຜູ້ປົກຄອງຂອງ **ກ** ຈະສິ້ນສຸດລົງ, ເມື່ອສິ້ນສຸດແລ້ວ **ກ** ມີໜ້າທີ່ຕ້ອງໄດ້ໄລ່ລຽງ ແລະ ສົ່ງຊັບສິນບັດທີ່ຍັງເຫຼືອນັ້ນຢ່າງເປັນລາຍລັກອັກສອນສົ່ງຄືນໃຫ້ແກ່ **ຄ** ພາຍໃນກຳນົດເວລາ 3 ເດືອນ ນັບແຕ່ມື້ສິ້ນສຸດການເປັນຜູ້ປົກຄອງເດັກ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ ສ້າງຂຶ້ນໃໝ່ເພາະວ່າປະມວນກົດໝາຍແພ່ງໄດ້ກຳນົດເງື່ອນໄຂ, ການສິ້ນສຸດ ແລະ ຜົນຂອງການສິ້ນສຸດ ການເປັນຜູ້ຄຸ້ມຄອງໄວ້ແລ້ວ ຖ້າຫາກມີການແຕ່ງຕັ້ງຜູ້ປົກຄອງ ເດັກກໍສາມາດນຳໃຊ້ມາດຕານີ້ ໄດ້ເພື່ອກຳນົດເງື່ອນໄຂ, ການສິ້ນສຸດ ແລະ ຜົນຂອງການສິ້ນສຸດ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 870-875 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 79, 83, 84 ແລະ 225 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະ ເພນີສານ	ສືບຕໍ່ຄົ້ນຄວ້າ.

ອະທິບາຍປະມວນກົດໝາຍແພ່ງ

ພາກທີ IV ຊັບ, ກຳມະສິດ ແລະ ສິດອື່ນຕໍ່ຊັບ
(ມາດຕາ 227-361)

ພາກທີ IV
ຊັບ, ກຳມະສິດ ແລະ ສິດອື່ນຕໍ່ຊັບ
ໝວດທີ 1
ຊັບ

ມາດຕາ 227 ຊັບ

ຊັບ ແມ່ນ ວັດຖຸ ແລະ ສິ່ງທີ່ມີຄຸນຄ່າ ຊຶ່ງປະກອບດ້ວຍ ຊັບມີຕົວຕົນ ແລະ ຊັບບໍ່ມີຕົວຕົນ.

ຊັບມີຕົວຕົນ ແມ່ນ ຊັບສິ່ງຂອງ ຊຶ່ງປະກອບດ້ວຍ ອະສັງຫາລິມະຊັບ ແລະ ສັງຫາລິມະຊັບ.

ຊັບບໍ່ມີຕົວຕົນ ແມ່ນ ສິ່ງບໍ່ມີຮູບຮ່າງ ເຊັ່ນ ສິດທອງ, ສິດທາງດ້ານຊັບສິນທາງປັນຍາ ເປັນຕົ້ນ ສິດຕໍ່ລິຂະສິດ, ສິດຕໍ່ສິດທິບັດ, ສິດຕໍ່ເຄື່ອງໝາຍການຄ້າ.

ຈຸດປະສົງ	ເພື່ອກຳນົດນິຍາມ ກ່ຽວກັບຊັບໃຫ້ຖືກຕ້ອງ ແລະ ໃຫ້ມີຄວາມເປັນເອກະພາບຕໍ່ກັບຄວາມເຂົ້າໃຈ ທາງດ້ານທິດສະດີ ແລະ ໃນການປະຕິບັດກົດໝາຍ.
ຕົວຢ່າງ	**1. ຊັບມີຕົວຕົນ ແມ່ນ ຊັບສິ່ງຂອງ ຊຶ່ງປະກອບດ້ວຍ ອະສັງຫາລິມະຊັບ ແລະ ສັງຫາລິມະຊັບ.** 1.1 ອະສັງຫາລິມະຊັບເປັນຕົ້ນ: ທີ່ດິນ, ສິ່ງທີ່ຕິດຈອດກັບທີ່ດິນເຊັ່ນ: ເຮືອນ, ຕົ້ນໄມ້ (ຊັບຄົງທີ່) 1.2 ສັງຫາລິມະຊັບເຊັ່ນ: ໂຕະ, ຕັ່ງ, ສາຍຄໍ, ແຫວນຄຳ. (ຊັບເຄື່ອນທີ່). **2. ຊັບບໍ່ມີຕົວຕົນ ແມ່ນ ສິ່ງບໍ່ມີຮູບຮ່າງ ເຊັ່ນ:** ລິຂະສິດ, ບົດປະພັນ, ເພງ, ສິດທອງ, ສິດຕໍ່ເຄື່ອງໝາຍການຄ້າ. (ສິ່ງຈັບບາຍບໍ່ໄດ້)
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງໃໝ່ ຍ້ອນວ່າກົດໝາຍຂອງ ສປປ ລາວ ໄດ້ນຳໃຊ້ຄຳສັບ ກ່ຽວກັບ ຊັບ ໃນຫຼາຍກົດໝາຍ. ມາດຕາ 2 ຂອງກົດໝາຍວ່າດ້ວຍຊັບສິນຂອງລັດ ໄດ້ໃຫ້ນິຍາມກ່ຽວກັບຊັບສິນຂອງລັດວ່າ ຊັບສິນຂອງລັດ ແມ່ນ ຊັບສົມບັດທີ່ເກີດຂຶ້ນຕາມທຳມະຊາດ, ການສ້າງຂຶ້ນຂອງຄົນທີ່ເປັນກຳມະສິດຂອງລັດ ແລະ ຂອງວິງຄະນະຍາດແຫ່ງຊາດ ຊຶ່ງປະກອບດ້ວຍ ສັງຫາລິມະຊັບ ແລະ ອະສັງຫາລິມະຊັບ ທີ່ມີຕົວຕົນ ແລະ ບໍ່ມີຕົວຕົນ ຢູ່ເທິງໜ້າດິນ,ໃຕ້ດິນ, ໜ້ານ້ຳ, ໃຕ້ນ້ຳ ແລະ ນ່ານຟ້າໃນຂອບເຂດຜືນແຜ່ນດິນຂອງ ສປປ ລາວ ລວມທັງຊັບສິນຂອງລັດ ສປປ ລາວ ທີ່ມີຢູ່ຕ່າງປະເທດ. ກົດໝາຍອາຍາ ໄດ້ນຳໃຊ້ ຄຳສັບກ່ຽວກັບຊັບ ກ່ຽວກັບການກະທຳຜິດເຊັ່ນ ການປຸ້ນ, ການລັກຊັບ, ການຊິງຊຍ ແລະ ອື່ນໆ ແຕ່ບໍ່ໄດ້ກຳນົດນິຍາມກ່ຽວກັບຊັບໄວ້. ສະນັ້ນ, ເພື່ອຄວາມເປັນເອກະພາບໃນຫາການນຳໃຊ້ ຈຶ່ງກຳນົດນິຍາມກ່ຽວກັບ ຊັບເຂົ້າໃນປະມວນກົດໝາຍແພ່ງ.

ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 105 ວັກທີ 2, ຂໍ້ 2 ແລະ ມາດຕາ 107 ຂອງປະມວນກົດໝາຍແພ່ງ ຫວຽດນາມ ປີ 2015; ມາດຕາ 85 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ; ມາດຕາ 137 ຂອງປະມວນກົດໝາຍແພ່ງ ແລະ ພານິດ ໄທ; ມາດຕາ 90 ຂອງປະມວນກົດໝາຍແພ່ງເຢຍລະມັນ.
ມາດຕາອ້າງອີງ	ມາດຕາ 2 ກົດໝາຍວ່າດ້ວຍ ຊັບສິນຂອງລັດ ປີ 2012; ມາດຕາ 228, 229 ແລະ 248 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 228 ອະສັງຫາລິມະຊັບ

ອະສັງຫາລິມະຊັບ ແມ່ນ ຊັບສິ່ງຂອງທີ່ບໍ່ສາມາດເຄື່ອນຍ້າຍໄດ້ ຊຶ່ງມີ ທີ່ດິນ ແລະ ຊັບສິ່ງຂອງ ທີ່ຕິດກັບທີ່ດິນຢ່າງຖາວອນ ເຊັ່ນ ເຮືອນ, ຕົ້ນໄມ້ ຫຼື ສິ່ງປຸກສ້າງອື່ນ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນກ່ຽວກັບນິຍາມ ຂອງອະສັງຫາລິມະຊັບຊຶ່ງນອນຢູ່ໃນຊັບມີຕົວຕົນ.
ຕົວຢ່າງ	1. ຊັບສິ່ງຂອງທີ່ບໍ່ສາມາດເຄື່ອນຍ້າຍໄດ້ມີ ທີ່ດິນ, ພູຜາ. 2. ຊັບສິ່ງຂອງທີ່ຕິດຈອດກັບທີ່ດິນຢ່າງຖາວອນເຊັ່ນ: ຕົ້ນໄມ້, ເຮືອນ, ແລະ ສິ່ງປຸກສ້າງອື່ນ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງໃໝ່ ຍ້ອນວ່າກົດໝາຍວ່າດ້ວຍກຳມະສິດ ປີ 1990 ບໍ່ໄດ້ກຳນົດນິຍາມ ກ່ຽວກັບອະສັງຫະລິມະຊັບ ແລະ ໄດ້ນຳໃຊ້ປົນເປກັນ ລະຫວ່າງ ຄຳສັບ ແລະ ຄຳອະທິບາຍ ຫຼື ເອົາຄຳອະທິບາຍ ມາເປັນຄຳສັບ ຊັບຄົງທີ່, ສະນັ້ນ ເພື່ອໃຫ້ມີຄວາມເປັນເອກະພາບ ຈຶ່ງກຳນົດມາດຕານີ້ເຂົ້າຕື້ມ ຊຶ່ງຈະເປັນພື້ນຖານໃຫ້ແກ່ການພິຈາລະນາແກ້ໄຂຂໍ້ຂັດແຍ່ງ ຫຼື ການໃຊ້ແທນໃນກໍລະນີທີ່ກໍຄວາມເສຍຫາຍ ຕໍ່ຊັບນັ້ນ ຫຼື ສິດ ຂອງເຈົ້າກຳມະສິດທີ່ຄວນໄດ້ຮັບຕາມກົດໝາຍ. ເຫດຜົນຂອງການເພີ່ມມາດຕານີ້ເຂົ້າໃໝ່ ແມ່ນເພື່ອເຮັດໃຫ້ເນື້ອໃນ ແລະ ຄວາມໝາຍຂອງມາດຕາທີ່ກ່ຽວຂ້ອງ ກັບອະສັງຫາລິມະຊັບ ມີຄວາມຊັດເຈນຂຶ້ນ ເຊັ່ນ ສິດໃນອະສັງຫາລິມະຊັບ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 139 ຂອງປະມວນກົດໝາຍແພ່ງ ແລະ ພານິດ ໄທ; ມາດຕາ 174 ວັກ 1 ຂອງປະມວນກົດໝາຍແພ່ງ ຫວຽດນາມ ປີ 2015; ມາດຕາ 86 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 2 ຂອງກົດໝາຍວ່າດ້ວຍຊັບສິນຂອງລັດ ປີ 2012; ມາດຕາ 227, 535 ແລະ 548 ຂອງປະມວນກົດໝາຍແພ່ງ.

ຂໍ້ມູນອື່ນ ຫຼື ປະເພນີສານ	ຍີ່ປຸ່ນຖືວ່າທີ່ດິນ ກັບ ສິ່ງປຸກສ້າງ ເປັນອະສັງຫາລິມະຊັບທີ່ເປັນເອກະລາດໃຜມັນ, ສ່ວນເຍຍລະມັນ ມາດຕາ 94 ຖືວ່າເປັນອະສັງຫາລິມະຊັບອັນດຽວກັນ, ສຳລັບ ສປປ ລາວ ແມ່ນຖືເປັນອະສັງຫາລິມະຊັບອັນດຽວກັນ ຄືກັບເຍຍລະມັນ.

ມາດຕາ 229 ສັງຫາລິມະຊັບ

ສັງຫາລິມະຊັບ ແມ່ນ ຊັບສິ່ງຂອງທີ່ສາມາດເຄື່ອນຍ້າຍໄດ້ ເຊັ່ນ ໂມງ, ໂຕະ, ຕັ່ງ, ສາຍຄໍ, ແຫວນ, ສັດ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນ ກ່ຽວກັບນິຍາມ ຂອງສັງຫາລິມະຊັບ ຊຶ່ງນອນຢູ່ໃນຊັບທີ່ມີຕົວຕົນ.
ຕົວຢ່າງ	ຊັບສິ່ງຂອງທີ່ສາມາດເຄື່ອນຍ້າຍໄດ້ເຊັ່ນ: ເຮືອບິນ, ກຳປັ່ນ, ເຮືອ, ລົດ, ໂຕະ, ຕັ່ງ, ຜົນຜະລິດ ແລະ ສັດລ້ຽງ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງໃໝ່ຍ້ອນວ່າ ກົດໝາຍວ່າດ້ວຍ ກຳມະສິດ ປີ 1990 ບໍ່ໄດ້ກຳນົດນິຍາມກ່ຽວກັບສັງຫະລິມະຊັບ ແລະ ໄດ້ນຳໃຊ້ປົນເປກັນ ລະຫວ່າງ ຄຳສັບ ແລະ ຄຳອະທິບາຍ ຫຼື ເອົາຄຳອະທິບາຍ ມາເປັນຄຳສັບ ຊັບເຄື່ອນທີ່. ສະນັ້ນ, ເພື່ອໃຫ້ມີຄວາມເປັນເອກະພາບ ຈຶ່ງກຳນົດມາດຕານີ້ເຂົ້າຕື່ມ ຊຶ່ງຈະເປັນພື້ນຖານ ໃຫ້ແກ່ການພິຈາລະນາແກ້ໄຂຂໍ້ຂັດແຍ່ງ ຫຼື ການໃຊ້ແທນໃນກໍລະນີທີ່ ກໍຄວາມເສຍຫາຍຕໍ່ຊັບນັ້ນ ຫຼື ສິດ ຂອງເຈົ້າກຳມະສິດ ທີ່ຄວນໄດ້ຮັບຕາມກົດໝາຍ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 174 ວັກ 2 ຂອງປະມວນກົດໝາຍແພ່ງ ຫວຽດນາມ ປີ 2015; ມາດຕາ 86 ວັກ 2 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ; ມາດຕາ 140 ປະມວນກົດໝາຍແພ່ງ ແລະ ພານິດ ໄທ.
ມາດຕາອ້າງອີງ	ມາດຕາ 2 ຂອງກົດໝາຍວ່າດ້ວຍຊັບສິນຂອງລັດ 2012; ມາດຕາ 528 ຂອງປະມວນກົດໝາຍ ແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 230 ໝາກຜົນ

ໝາກຜົນ ແມ່ນ ຜົນໄດ້ຮັບທີ່ເກີດຈາກຊັບສິ່ງຂອງ ໂດຍທຳມະຊາດ ແລະ ໂດຍກົດໝາຍ.

ໝາກຜົນໂດຍທຳມະຊາດ ແມ່ນ ຜົນທີ່ເກີດຈາກຊັບສິ່ງຂອງ ໂດຍທຳມະຊາດ ເຊັ່ນ ຜົນລະປູກ, ໝາກໄມ້, ລູກສັດ, ຂົນສັດ.

ໝາກຜົນໂດຍກົດໝາຍ ແມ່ນ ລາຍໄດ້ຈາກການໃຫ້ເຊົ່າ ຫຼື ໃຊ້ຊັບສິ່ງຂອງ, ດອກເບ້ຍ, ເງິນປັນຜົນ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ ຄວາມໝາຍຂອງໝາກຜົນ ແລະ ປະເພດການໄດ້ມາຂອງໝາກຜົນ.
ຕົວຢ່າງ	**1. ໝາກຜົນໂດຍທຳມະຊາດ ເຊັ່ນ:** ລູກງົວ, ລູກຄວາຍ, ໝາກໄມ້. **2. ໝາກຜົນໂດຍກົດໝາຍເຊັ່ນ:** ຄ່າເຊົ່າ, ດອກເບ້ຍເງິນຝາກ.

ເຫດຜົນໃນການປັບປຸງ	ມາດຕານີ້ ປັບປຸງມາຈາກ ມາດຕາ 34,60 ຂອງກົດໝາຍວ່າດ້ວຍກຳມະສິດ ປັດຈຸບັນທີ່ຈະບໍ່ມີຜົນບັງຄັບໃຊ້ ພາຍຫຼັງທີ່ປະມວນກົດໝາຍແພ່ງ ໄດ້ຖືກ ບັນຍັດແລ້ວ ແລະ ສອງມາດຕານີ້ ກໍໄດ້ກຳນົດນິຍາມກ່ຽວກັບໝາກຜົນ ແລະ ແຍກອອກຈາກກັນຢ່າງຈະແจ້ງ ວ່າອັນໃດ ແມ່ນຄຳສັບລວມ ແລະ ອັນໃດ ແມ່ນຄຳສັບສະເພາະ ລະຫວ່າງ ໝາກຜົນທາງດ້ານກົດໝາຍ ແລະ ໝາກຜົນ ທາງທຳມະຊາດ.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງ ຂອງປະເທດອື່ນ	ມາດຕາ 148 ຂອງປະມວນກົດໝາຍແພ່ງ ແລະ ພານິດ ໄທ; ມາດຕາ 99 ຂອງປະມວນກົດໝາຍແພ່ງ ເຢຍລະມັນ; ມາດຕາ 241 ຂອງປະມວນກົດໝາຍແພ່ງ; ມາດຕາ 109 ຂອງປະມວນກົດໝາຍແພ່ງ ຫວຽດນາມ ປີ 2015; ມາດຕາ 88 ຂອງປະມວນກົດໝາຍແພ່ງ ຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 241 ແລະ 298 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 231 ຊັບສິ່ງຂອງຕົ້ນຕໍ ແລະ ຊັບສິ່ງຂອງປະກອບ

ຊັບສິ່ງຂອງຕົ້ນຕໍ ແມ່ນຊັບສິ່ງຂອງ ທີ່ເປັນເອກະລາດ ຊຶ່ງສາມາດນຳໃຊ້ ຕາມຄຸນປະໂຫຍດ ຂອງຊັບສິ່ງຂອງນັ້ນ.

ຊັບສິ່ງຂອງປະກອບ ແມ່ນ ຊັບສິ່ງຂອງທີ່ຮັບໃຊ້ໂດຍກົງ ໃຫ້ແກ່ການນຳໃຊ້ຄຸນປະໂຫຍດຂອງ ຊັບສິ່ງຂອງຕົ້ນຕໍ, ແມ່ນພາກສ່ວນໜຶ່ງຂອງຊັບສິ່ງຂອງຕົ້ນຕໍ ແຕ່ສາມາດແຍກອອກຈາກຊັບສິ່ງຂອງຕົ້ນຕໍ.

ໃນກໍລະນີຫາກມີການຊື້ຂາດຊັບສິ່ງຂອງຕົ້ນຕໍ ໃຫ້ຖືວ່າໄດ້ຊື້ຂາດຊັບສິ່ງຂອງປະກອບໄປພ້ອມ, ເວັ້ນເສຍແຕ່ ຫາກໄດ້ຕົກລົງກັນໄວ້ເປັນຢ່າງອື່ນ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນ ຄວາມໝາຍ ແລະ ຄຸນລັກສະນະສະເພາະ ຂອງຊັບສິ່ງ ຂອງຕົ້ນຕໍ ແລະ ຊັບສິ່ງຂອງປະກອບ.
ຕົວຢ່າງ	ດາບ ເປັນຊັບສິ່ງຂອງຕົ້ນຕໍ, ຝັກດາບ ເປັນຊັບສິ່ງຂອງປະກອບ; ຈອກນ້ຳຊາ, ແມ່ນຊັບສິ່ງຂອງຕົ້ນຕໍ, ຝາປົກຈອກ ແມ່ນຊັບສິ່ງຂອງປະກອບ. ຖ້າວ່າຫາກມີ ການຊື້ຂາຍດາບທີ່ມີຝັກ, ຊື້ຂາຍຈອກນ້ຳຊາທີ່ມີຝາ ໃຫ້ຖືວ່າໄດ້ຂາຍຊັບທີ່ເປັນ ສ່ວນປະກອບໄປນຳ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ ສ້າງໃໝ່ຍ້ອນວ່າເນື້ອໃນກົດໝາຍວ່າດ້ວຍ ກຳມະສິດ ປີ 1990 ບໍ່ໄດ້ ກຳນົດນິຍາມ ກ່ຽວກັບຊັບສິ່ງຂອງຕົ້ນຕໍ ແລະ ຊັບສິ່ງຂອງປະກອບ. ສະນັ້ນ ເພື່ອ ໃຫ້ມີຄວາມເປັນເອກະພາບ ຈຶ່ງກຳນົດມາດຕານີ້ເຂົ້າຕື່ມ ຊຶ່ງຈະເປັນພື້ນຖານ ໃຫ້ແກ່ການພິຈາລະນາແກ້ໄຂຂໍ້ຂັດແຍ່ງ ຫຼື ການໃຊ້ແທນ ໃນກໍລະນີທີ່ກໍຄວາມ ເສຍຫາຍຕໍ່ຊັບນັ້ນ ຫຼື ສິດ ຂອງເຈົ້າກຳມະສິດ ທີ່ຄວນໄດ້ຮັບຕາມກົດໝາຍ. ໃນກໍລະນີຫາກມີການຕົກລົງ ລະຫວ່າງ ຄູ່ກໍລະນີໃນການ ຊື້-ຂາຍ ຊັບສິ່ງ ຂອງຕົ້ນຕໍ ຫຼື ໄດ້ນຳເອົາຊັບສິ່ງຂອງຕົ້ນຕໍໄປຈຳນຳ ແຕ່ບໍ່ໄດ້ມີການ ຕົກລົງກັນ ມາກ່ອນ ກ່ຽວກັບການຍົກເວັ້ນຊັບສິ່ງຂອງປະກອບ ກໍໃຫ້ຖືວ່າຊັບສິ່ງຂອງປະ ກອບນັ້ນກໍຕ້ອງລວມຢູ່ນຳເປົ້າໝາຍຂອງສັນຍາ ຊື້ຂາຍ ຫຼື ຈຳນຳ ດັ່ງກ່າວ.

ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 176 ຂອງປະມວນກົດໝາຍແພ່ງ ຫວຽດນາມ ປີ 2005; ມາດຕາ 110 ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2015; ມາດຕາ 147 ຂອງປະມວນກົດໝາຍແພ່ງ ແລະ ພານິດ ໄທ; ມາດຕາ 87 ຂອງປະມວນກົດໝາຍແພ່ງ ຍີ່ປຸ່ນ.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 232 ຊັບສິ່ງຂອງສາມາດແຍກໄດ້ ແລະ ຊັບສິ່ງຂອງບໍ່ສາມາດແຍກໄດ້

ຊັບສິ່ງຂອງສາມາດແຍກໄດ້ ແມ່ນຊັບສິ່ງຂອງ ທີ່ສາມາດແຍກອອກເປັນສ່ວນຈະແຈ້ງ ຊຶ່ງແຕ່ລະສ່ວນຍັງຮັກສາລັກສະນະ ແລະ ຄຸນນະພາບການນຳໃຊ້ ໄວ້ຄືເບື້ອງຕົ້ນ ເຊັ່ນ ເຂົ້າ, ນ້ຳຕານ.

ຊັບສິ່ງຂອງບໍ່ສາມາດແຍກໄດ້ ແມ່ນ ຊັບສິ່ງຂອງ ຊຶ່ງເມື່ອແຍກສ່ວນໃດໜຶ່ງອອກຈາກກັນແລ້ວ ຈະບໍ່ສາມາດຮັກສາລັກສະນະ ແລະ ຄຸນນະພາບການນຳໃຊ້ ໄດ້ຄືເບື້ອງຕົ້ນ ຫຼື ເຮັດໃຫ້ຊັບສິ່ງຂອງເດີມເສຍຫາຍ, ເປ່ເພ ຫຼື ມີຄ່າໃຊ້ຈ່າຍສູງໂດຍບໍ່ຈຳເປັນ ໃນເວລາຕັດແຍກອອກຈາກກັນ ເຊັ່ນ ໝ່ວຍກົຕາ ແລະ ສາຍກົຕາ, ເວັ້ນເສຍແຕ່ກົດໝາຍ ຫຼື ສັນຍາ ຫາກໄດ້ກຳນົດໄວ້ເປັນຢ່າງອື່ນ ຖ້າຈຳເປັນຕ້ອງໄດ້ແບ່ງຊັບສິ່ງຂອງທີ່ບໍ່ສາມາດແຍກໄດ້ນັ້ນ ກໍໃຫ້ຄິດໄລ່ເປັນມູນຄ່າ ເພື່ອແບ່ງປັນ.

ຈຸດປະສົງ	ເພື່ອກຳນົດນິຍາມ ຂອງຊັບສິ່ງຂອງທີ່ສາມາດແຍກໄດ້ ແລະ ຊັບທີ່ບໍ່ສາມາດແຍກໄດ້ ເຮັດໃຫ້ເຫັນ ກ່ຽວກັບເນື້ອໃນ ຄວາມໝາຍຂອງມັນ.
ຕົວຢ່າງ	1. ຊັບສິ່ງຂອງສາມາດແຍກອອກຈາກກັນໄດ້ເຊັ່ນ: ເຂົ້າ, ນ້ຳຕານ, ເກືອ, ນ້ຳຊາ, ກາເຟ ສາມາດແຍກອອກຈາກກັນໄດ້ ແຕ່ກໍຍັງຮັກສາລັກສະນະ ແລະ ຄຸນນະພາບໄວ້ຄືເກົ່າ. 2. ໂຕະໜ່ວຍໜຶ່ງຈະປະກອບມີ ໜ້າໂຕະ, ຂາໂຕະ ແລະ ສ່ວນປະກອບອື່ນໆ ແຕ່ຖ້າວ່າແຍກຂາໂຕະອອກຈາກໜ່ວຍໂຕະແລ້ວ ຈະເຮັດໃຫ້ໂຕະນັ້ນ ໃຊ້ການບໍ່ໄດ້ຄືເກົ່າ. 3. ໝ່ວຍກົຕາ ແລະ ສາຍກົຕາຖ້າແຍກ ສາຍກົຕາ ອອກຈາກໝ່ວຍກົຕາແລ້ວ ເຖິງວ່າໝ່ວຍກົຕາຈະບໍ່ເປ່ເພ ຫຼື ເສຍຫາຍກໍຕາມ ແຕ່ກໍບໍ່ສາມາດໃຊ້ໄດ້ຕາມຈຸດປະສົງ ຫຼື ເປົ້າໝາຍຂອງກົຕານັ້ນ. 4. ລົດກັບຕີນລົດ ຖ້າແຍກຕີນລົດ ອອກຈາກຕົວລົດແລ້ວລົດນັ້ນກໍຈະໃຊ້ການບໍ່ໄດ້.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງໃໝ່ເພື່ອເຮັດໃຫ້ເນື້ອໃນ ແລະ ຄວາມໝາຍ ຂອງຊັບສິ່ງຂອງທີ່ສາມາດແຍກໄດ້ ແລະ ຊັບສິ່ງຂອງທີ່ບໍ່ສາມາດແຍກໄດ້ນັ້ນ ມີຄວາມໝາຍຈະແຈ້ງຂຶ້ນ ເມື່ອມາດຕາດັ່ງກ່າວຖືກນຳໃຊ້ໃນກໍລະນີແຕກຕ່າງກັນລະຫວ່າງ ຊັບທີ່ແຍກໄດ້ ແລະ ຊັບທີ່ບໍ່ສາມາດແຍກໄດ້.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 177 ຂອງປະມວນກົດໝາຍແພ່ງ ຫວຽດນາມ ປີ 2005 ; ມາດຕາ 111 ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2015; ມາດຕາ 141 ແລະ 142 ຂອງປະມວນກົດໝາຍແພ່ງ ແລະ ພານິດ ໄທ.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 233 ຊັບສິ່ງຂອງປ່ຽນແທນໄດ້ ແລະ ຊັບສິ່ງຂອງບໍ່ປ່ຽນແທນໄດ້

ຊັບສິ່ງຂອງປ່ຽນແທນໄດ້ ແມ່ນ ຊັບສິ່ງຂອງທົ່ວໄປ ທີ່ມີຮູບຊົງ, ຄຸນລັກສະນະ, ຍີ່ຫໍ້, ປະເພດ, ຊະນິດ, ປະລິມານ, ຄຸນນະພາບ, ອຸ່ນ ແລະ ມູນຄ່າດຽວກັນ ເຊັ່ນ ໂທລະສັບມືຖື, ຄອມພິວເຕີ.

ຊັບສິ່ງຂອງບໍ່ປ່ຽນແທນໄດ້ແມ່ນ ຊັບສິ່ງຂອງ ທີ່ມີຄວາມແຕກຕ່າງຈາກຊັບສິ່ງຂອງອື່ນ ດ້ວຍຈຸດພິເສດສະເພາະກ່ຽວກັບ ສັນຍາລັກ, ຮູບຮ່າງ, ສີສັນ ແລະ ຫາໄດ້ຍາກ ເຊັ່ນ ຮູບແຕ້ມ, ສິ່ງສັກສິດ, ວັດຖຸບູຮານ.

ໃນກໍລະນີທີ່ຊັບສິ່ງຂອງທີ່ປ່ຽນແທນໄດ້ ທີ່ເປັນເປົ້າໝາຍຂອງສັນຍາ ຫຼື ນິຕິກຳ ຫາກມີຂໍ້ບົກພ່ອງ, ເປ່ເພ ຊຶ່ງພາໃຫ້ບໍ່ສາມາດປະຕິບັດພັນທະ ຕາມສັນຍາ ຫຼື ນິຕິກຳໄດ້ ໃຫ້ເອົາຊັບສິ່ງຂອງອັນອື່ນ ທີ່ປ່ຽນແທນໄດ້ມາແທນ, ເວັ້ນເສຍແຕ່ໄດ້ມີການຕົກລົງກັນໄວ້ເປັນຢ່າງອື່ນ.

ຈຸດປະສົງ	ເພື່ອກຳນົດນິຍາມ ຂອງຊັບສິ່ງຂອງທີ່ປ່ຽນແທນກັນໄດ້ ແລະ ຊັບສິ່ງຂອງບໍ່ສາມາດປ່ຽນແທນກັນໄດ້ ພ້ອມທັງເຮັດໃຫ້ເຫັນໄດ້ ເນື້ອໃນຄວາມໝາຍຂອງຊັບ ດັ່ງກ່າວ.
ຕົວຢ່າງ	**1. ກ** ເຮັດສັນຍາຊື້ນ້ຳໝາກກ້ຽງ ຈຳນວນ 100 ແກ້ດ ນຳ **ຂ** ໃນເວລາ **ຂ** ຂົນສົ່ງໄປໃຫ້ **ກ** ນັ້ນ ໄດ້ເກີດອຸບປະຕິເຫດ ເຮັດໃຫ້ສິນຄ້ານັ້ນເສຍຫາຍໝົດ, ດັ່ງນັ້ນ, **ຂ** ຈຶ່ງສະເໜີອົານ້ຳໝາກກ້ຽງຊະນິດດຽວກັນ ຈຳນວນ 100 ແກ້ດ ມາປ່ຽນແທນ. **2. ກ** ຕົກລົງເຮັດສັນຍາຊື້ ລົດເກົ່າທີ່ຫາຍາກ ມີອາຍຸຫຼາຍປີ ນຳ **ຂ** ແລະ **ກ** ໄດ້ຈ່າຍເງິນໝົດແລ້ວ ແຕ່ຢູ່ໃນສັນຍາ ໄດ້ຕົກລົງໃຫ້ **ຂ** ເປັນຜູ້ນຳລົດໄປສົ່ງຢູ່ເຮືອນ ຂອງ **ກ** ໃນເວລາເດີນທາງນັ້ນ ໄດ້ເກີດອຸບປະຕິເຫດ ພາໃຫ້ລົດຄັນດັ່ງກ່າວ ເປ່ເພໃຊ້ການບໍ່ໄດ້; ເມື່ອເປັນແນວນັ້ນ **ກ** ຈຶ່ງຮຽກຮ້ອງເອົາລົດເກົ່າ ຄັນອື່ນມາປ່ຽນແທນ ແຕ່ **ຂ** ກໍບໍ່ມີລົດເກົ່າທີ່ຫາຍາກ ມາປ່ຽນແທນໄດ້. ນອກຈາກນີ້ ຊັບສິ່ງຂອງບໍ່ປ່ຽນແທນໄດ້ ຍັງມີຮູບແຕ້ມ, ສິ່ງສັກສິດ ແລະ ເຄື່ອງວັດຖຸບູຮານ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງໃໝ່ຍ້ອນວ່າ ກົດໝາຍວ່າດ້ວຍ ກຳມະສິດ ປີ 1990 ບໍ່ໄດ້ກຳນົດນິຍາມກ່ຽວກັບ ຊັບສິ່ງຂອງປ່ຽນແທນໄດ້ ແລະ ຊັບສິ່ງຂອງບໍ່ປ່ຽນແທນໄດ້. ສະນັ້ນ, ເພື່ອໃຫ້ມີຄວາມເປັນເອກະພາບ ຈຶ່ງກຳນົດມາດຕານີ້ເຂົ້າຕື້ມ ເພື່ອຢາກໃຫ້ຮູ້ວ່າ ຊັບສິ່ງຂອງໃດທີ່ສາມາດປ່ຽນແທນໄດ້ ແລະ ຊັບສິ່ງຂອງອັນໃດທີ່ບໍ່ສາມາດປ່ຽນແທນໄດ້. ກໍລະນີເປັນ ຊັບສິ່ງຂອງປ່ຽນແທນໄດ້ນັ້ນ ເຖິງບໍ່ສາມາດສົ່ງມອບໄດ້ກໍຕາມ ແຕ່ມັນຍັງມີຊັບສິ່ງຂອງສະນິດດຽວກັນ, ລະດັບເທົ່າທຽມກັນ, ປະລິມານເທົ່າກັນຢູ່ ຈຶ່ງສາມາດສົ່ງມອບຊັບສິ່ງຂອງດັ່ງກ່າວໄດ້. ກົງກັນຂ້າມ ສຳລັບຊັບສິ່ງຂອງບໍ່ປ່ຽນແທນນັ້ນ ແມ່ນບໍ່ສາມາດນຳຊັບສິ່ງຂອງມາມອບແທນໄດ້ ຈຶ່ງນຳໄປສູ່ບັນຫາເລື່ອງການຮຽກຮ້ອງ ໃຫ້ຊົດເຊີຍຄ່າເສຍຫາຍເພື່ອແທນການມອບ. ການເຮັດໃຫ້ເຫັນຄວາມແຕກຕ່າງດັ່ງກ່າວ ແມ່ນເຫດຜົນໃນການສ້າງມາດຕານີ້.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 179 ຂອງປະມວນກົດໝາຍແພ່ງ ຫວຽດນາມ ປີ 2005; ມາດຕາ 113 ຂອງປະມວນກົດໝາຍແພ່ງ ຫວຽດນາມ ປີ 2015.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.

ຂໍ້ມູນອື່ນ ຫຼື ປະເພນີສານ	ໃນການໄຈ້ແຍກປະເພດຊັບທີ່ໃກ້ຄຽງກັນ ກັບ ການໄຈ້ແຍກຊັບສິ່ງຂອງ ທີ່ບໍ່ສາມາດປ່ຽນແທນກັນໄດ້ ກັບຊັບສິ່ງຂອງທີ່ປ່ຽນແທນກັນໄດ້ນັ້ນ ມີການ ໄຈ້ແຍກຊັບສິ່ງຂອງສະເພາະ ແລະ ຊັບສິ່ງຂອງທີ່ບໍ່ສະເພາະ ຊຶ່ງການໄຈ້ແຍກ ຊັບສິ່ງຂອງທີ່ປ່ຽນແທນໄດ້ ແລະ ບໍ່ສາມາດປ່ຽນແທນໄດ້ນັ້ນ ແມ່ນການພິຈາ ລະນາແບບພາວະວິໃສ ໄປຕາມຄຸນລັກສະນະຂອງວັດຖຸ, ສ່ວນການໄຈ້ແຍກ ຊັບສິ່ງຂອງສະເພາະ ແລະ ຊັບບໍ່ສະເພາະນັ້ນ ເປັນການພິຈາລະນາ ແບບ ອັດຕະວິໃສ ຕາມການຕົກລົງຂອງຄູ່ກຳລະນີ ໃນແຕ່ລະສັນຍາ, ໃນກໍລະນີທີ່ຄູ່ ສັນຍາໄດ້ເນັ້ນໜັກລັກສະນະສະເພາະຂອງຊັບສິ່ງຂອງໄວ້ ໃນສັນຍາແລ້ວ ບໍ່ວ່າຈະເປັນຊັບທີ່ປ່ຽນແທນໄດ້ ແລະ ຊັບທີ່ບໍ່ສາມາດປ່ຽນແທນໄດ້ ມາເປັນ ເປົ້າໝາຍຂອງສັນຍາ ແມ່ນເອີ້ນວ່າ ຊັບສິ່ງຂອງສະເພາະ ສ່ວນກໍລະນີມີການ ຕົກລົງກັນໄວ້ວ່າ ເອົາຊັບສິ່ງຂອງອັນໃດມາປ່ຽນແທນກໍໄດ້ ໂດຍທີ່ບໍ່ໄດ້ເຈາະ ຈົງລັກສະນະສະເພາະຂອງຊັບສິ່ງຂອງນັ້ນເອີ້ນວ່າຊັບສິ່ງຂອງບໍ່ສະເພາະ, ໂດຍທົ່ວໄປແລ້ວຊັບສິ່ງຂອງທີ່ບໍ່ປ່ຽນແທນກັນໄດ້ ແມ່ນຊັບສິ່ງຂອງສະເພາະ, ສ່ວນຊັບສິ່ງຂອງທີ່ປ່ຽນແທນໄດ້ນັ້ນສ່ວນໃຫຍ່ແມ່ນຊັບສິ່ງຂອງບໍ່ສະເພາະ ແຕ່ໃນບາງກໍລະນີກໍບໍ່ເປັນໄປຕາມນັ້ນ ເຊັ່ນ: **ຕົວຢ່າງ 1:** ສັດ (ເຊັ່ນ ໝູ) ມີລັກສະນະສະເພາະຖ້າເບິ່ງແບບພາວະວິໄສແລ້ວ ຈະເປັນຊັບສິ່ງຂອງ ທີ່ບໍ່ສາມາດປ່ຽນແທນໄດ້ ແຕ່ໃນກໍລະນີຄູ່ສັນຍາຫາກ ໄດ້ຕົກລົງກັນໄວ້ວ່າ ໂຕໃດກໍໄດ້ຂໍແຕ່ເປັນໝູ ຂອງຜູ້ຂາຍທີ່ມີລັກສະນະຄ້າຍຄື ກັນໃນຈຳນວນ 100 ໂຕ (ໂຕລະ 50 ກິໂລກຼາມ) ຈະເປັນໝູໂຕໃດກໍໄດ້ນັ້ນ ກໍຈະຖືວ່າເປັນຊັບ ບໍ່ສະເພາະ. **ຕົວຢ່າງ 2:** ເຂົ້າພັນດຽວກັນບັນຈຸໃສ່ຖົງ, ຖົງລະ 10 ກິໂລກຼາມ ຈຳນວນ 100 ຖົງ, ເມື່ອເບິ່ງແບບພາວະວິໄສແລ້ວ ກໍເປັນຊັບສິ່ງຂອງທີ່ປ່ຽນແທນໄດ້ ແຕ່ຖ້າວ່າໃນສັນຍາຊື້ຂາຍ ຫາກໄດ້ຕົກລົງກັນໄວ້ວ່າ ເອົາເຂົ້າຊະນິດດຽວກັນ ຂອງຜູ້ຂາຍ ຈຳນວນ 100 ຖົງໂດຍລະບຸເອົາຖົງລະ 10 ກິໂລກຼາມ ເປັນເປົ້າ ໝາຍຂອງສັນຍານັ້ນ ກໍຈະຖືວ່າເປັນຊັບສິ່ງຂອງສະເພາະ ທີ່ບໍ່ສາມາດປ່ຽນ ແທນໄດ້.

ມາດຕາ 234 ຊັບສິ່ງຂອງທີ່ປະກອບເປັນໜຶ່ງດຽວ

ຊັບສິ່ງຂອງທີ່ປະກອບເປັນໜຶ່ງດຽວ ແມ່ນ ຊັບສິ່ງຂອງທີ່ປະກອບດ້ວຍ ສ່ວນຕ່າງໆທີ່ກົມກຽວກັນ, ຕິດພັນຊຶ່ງກັນ ແລະ ກັນ ກາຍເປັນຊັບສິ່ງຂອງທີ່ສົມບູນ. ຖ້າຫາກຂາດສ່ວນໃດໜຶ່ງ ຫຼື ສ່ວນໃດໜຶ່ງ ບໍ່ກົມກຽວກັນ ຈະບໍ່ສາມາດນຳໃຊ້ໄດ້ ຫຼື ເຮັດໃຫ້ຄຸນຄ່າການນຳໃຊ້ຂອງຊັບສິ່ງຂອງນັ້ນຫຼຸດລົງ ເຊັ່ນ ເຄື່ອງຈັກ, ແຄນ.

ຊັບສິ່ງຂອງທີ່ປະກອບເປັນໜຶ່ງດຽວ ບໍ່ສາມາດແຍກອອກໃນເວລາຊື້ຂາດຊັບສິ່ງຂອງນັ້ນ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນ ຄວາມໝາຍ ແລະ ລັກສະນະສະເພາະ ຂອງຊັບສິ່ງຂອງ ທີ່ປະກອບເປັນໜຶ່ງດຽວ
ຕົວຢ່າງ	1. ໂຕະ ປະກອບດ້ວຍໜ້າໂຕະ, ຂາໂຕະ ແລະ ສ່ວນປະກອບອື່ນໆ,ຖ້າຂາດ ສ່ວນປະກອບໃດໜຶ່ງ ກໍຈະບໍ່ເປັນໂຕະ. 2. ໂມງ ມີສ່ວນປະກອບຄື:ໂຄງ ຫຼື ຮ່າງ ຖ້າຂາດສ່ວນປະກອບໃດໜຶ່ງ ກໍຈະ ບໍ່ເປັນໂມງ.

ເຫດຜົນໃນການປັບປຸງ	ມາດຕານີ້ ປັບປຸງຍ້ອນວ່າກົດໝາຍ ວ່າດ້ວຍກຳມະສິດ ປີ 1990 ບໍ່ໄດ້ກຳນົດຄວາມໝາຍ ແລະ ລັກສະນະສະເພາະຂອງນິຍາມ ກ່ຽວກັບ ຊັບສິ່ງຂອງ ທີ່ປະກອບເປັນໜຶ່ງດຽວ. ສະນັ້ນ, ເພື່ອໃຫ້ມີຄວາມເປັນເອກະພາບ ຈຶ່ງກຳນົດ ມາດຕານີ້ເຂົ້າຕື່ມ ຊຶ່ງຈະເປັນຜົນປະໂຫຍດ ແລະ ເປັນພື້ນຖານ ໃຫ້ແກ່ການ ພິຈາລະນາແກ້ໄຂບັນຫາທີ່ເປັນຂໍ້ຂັດແຍ່ງເປັນຕົ້ນ ການເຮັດສັນຍາຊື້ຂາຍ, ການກຳນົດການໃຊ້ແທນຄ່າເສຍຫາຍ ແລະ ການຕີມູນຄ່າຂອງຊັບ.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງ ຂອງປະເທດອື່ນ	ມາດຕາ 180 ຂອງປະມວນກົດໝາຍແພ່ງ ຫວຽດນາມ ປີ 2005; ມາດຕາ 114 ຂອງປະມວນກົດໝາຍແພ່ງ ຫວຽດນາມ 2015.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ໝວດທີ 2
ການຄອບຄອງ

ມາດຕາ 235 ການຄອບຄອງ

ການຄອບຄອງ ແມ່ນ ການຍຶດຖື ແລະ ຄຸ້ມຄອງຊັບສິ່ງຂອງ.

ຮູບການຕົ້ນຕໍຂອງການຄອບຄອງ ມີ ດັ່ງນີ້:

1. ການຄອບຄອງຊັບສິ່ງຂອງໂດຍທາງກົງ ແລະ ທາງອ້ອມ;
2. ການຄອບຄອງດ້ວຍຄວາມບໍລິສຸດໃຈ ແລະ ບໍ່ບໍລິສຸດໃຈ;
3. ການຄອບຄອງໂດຍຖືກຕ້ອງ ແລະ ບໍ່ຖືກຕ້ອງ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນຄວາມໝາຍ ແລະ ຮູບການຂອງການຄອບຄອງຊັບສິ່ງຂອງ.
ຕົວຢ່າງ	**ກ** ເກັບໂທລະສັບໜ່ວຍໜຶ່ງ, ໃນເວລາໂທລະສັບໜ່ວຍນັ້ນຢູ່ນຳ **ກ, ກ** ເປັນຜູ້ຄອບຄອງໂທລະສັບ. ຕົວຢ່າງຂໍ້ 1 ໃຫ້ເບິ່ງ ຢູ່ມາດຕາ 236; ຂອງບົດອະທິບາຍປະມວນກົດໝາຍແພ່ງ ຕົວຢ່າງຂໍ້ 2 ໃຫ້ເບິ່ງ ຢູ່ມາດຕາ 237; ຂອງບົດອະທິບາຍປະມວນກົດໝາຍແພ່ງ ຕົວຢ່າງຂໍ້ 3 ໃຫ້ເບິ່ງ ຢູ່ມາດຕາ 238.ຂອງບົດອະທິບາຍປະມວນກົດໝາຍແພ່ງ
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງໃໝ່ຍ້ອນວ່າ ກົດໝາຍວ່າດ້ວຍກຳມະສິດ ປີ 1990 ກຳນົດກ່ຽວກັບ ການຄອບຄອງຊັບດ້ວຍຄວາມບໍລິສຸດໃຈ, ໄວ້ໃນມາດຕາ 42, ມາດຕາ 58 ແລະ ມາດຕາ 59 ຊຶ່ງເຫັນວ່າບໍ່ມີມາດຕາທີ່ກຳນົດນິຍາມ ແລະ ຮູບການ ຄອບຄອງ ຈຶ່ງມີຄວາມຈຳເປັນຕ້ອງກຳນົດເຂົ້າໃສ່.

ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 179,183,184 ແລະ 191 ຂອງປະມວນກົດໝາຍແພ່ງ ຫວຽດນາມ ປີ 2015. ມາດຕາ 180 ຂອງປະມວນກົດໝາຍແພ່ງ ຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 252 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 236 ການຄອບຄອງຊັບສິ່ງຂອງໂດຍທາງກົງ ແລະ ທາງອ້ອມ

ເມື່ອບຸກຄົນໃດໜຶ່ງ ຫາກເອົາຊັບສິ່ງຂອງທີ່ຕົນຄອບຄອງໃຫ້ບຸກຄົນອື່ນຄອບຄອງ ເຊັ່ນ ການໃຫ້ເຊົ່າ, ການໃຫ້ຢືມແລ້ວ ຜູ້ກ່ຽວຈະເປັນຜູ້ຄອບຄອງໂດຍທາງອ້ອມ ສ່ວນຜູ້ໄດ້ຮັບຊັບສິ່ງຂອງນັ້ນ ກໍຈະເປັນຜູ້ຄອບຄອງໂດຍທາງກົງ.

ຈຸດປະສົງ	ເພື່ອກຳນົດນິຍາມ ຂອງການຄອບຄອງໂດຍທາງກົງ ແລະ ການຄອບຄອງໂດຍທາງອ້ອມ ຊຶ່ງລ້ວນແຕ່ນອນຢູ່ໃນການຄອບຄອງ ໂດຍສື່ໃຫ້ເຫັນຄວາມແຕກຕ່າງ ຂອງແຕ່ລະກໍລະນີ.
ຕົວຢ່າງ	**ກ** ໄດ້ເອົາລົດຂອງຕົນໃຫ້ **ຂ** ເຊົ່າ ຖືວ່າ **ຂ** ຜູ້ເຊົ່າເປັນຜູ້ຄອບຄອງໂດຍທາງກົງ ແລະ **ກ** ຜູ້ໃຫ້ເຊົ່າເປັນຜູ້ຄອບຄອງໂດຍທາງອ້ອມ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງໃໝ່ຍ້ອນວ່າ ໃນການຄອບຄອງຊັບສິ່ງຂອງໃດໜຶ່ງນັ້ນ ນອກຈາກກໍລະນີຂອງການຄອບຄອງຊັບສິ່ງດ້ວຍຕົນເອງແລ້ວ ຍັງສາມາດທຳການຄອບຄອງ, ຮັກສາການຄອບຄອງໂດຍຜ່ານບຸກຄົນອື່ນໄດ້ອີກ ຊຶ່ງຜູ້ຄອບຄອງໂດຍທາງກົງເປັນຜູ້ຕາງໜ້າການຄອບຄອງ ຂອງຜູ້ຄອບຄອງໂດຍທາງອ້ອມ ດັ່ງນັ້ນ ເຫດຜົນໃນການສ້າງມາດຕານີ້ ກໍເພື່ອຍົກໃຫ້ເຫັນ ເຖິງຄວນແຕກຕ່າງ ລະຫວ່າງ ຜູ້ຄອບຄອງໂດຍທາງອ້ອມ ກໍສາມາດຄອບຄອງ, ຮັກສາການຄອບຄອງໄດ້ ໂດຍຜ່ານຜູ້ຄອບຄອງໂດຍທາງກົງ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 181 ແລະ 204 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 235 ແລະ 247 ຂໍ້ 3 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 237 ການຄອບຄອງດ້ວຍຄວາມບໍລິສຸດໃຈ ແລະ ບໍ່ບໍລິສຸດໃຈ

ການຄອບຄອງດ້ວຍຄວາມບໍລິສຸດໃຈ ແມ່ນ ການຄອບຄອງ ໂດຍບໍ່ຮູ້ວ່າຊັບສິ່ງຂອງທີ່ຕົນຄອບຄອງຢູ່ນັ້ນ ຍັງເປັນກຳມະສິດຂອງບຸກຄົນອື່ນ ຊຶ່ງສັນນິຖານໄດ້ຈາກການນຳໃຊ້ຊັບສິ່ງຂອງຢ່າງເປີດເຜີຍ, ສະຫງົບ ແລະ ຕໍ່ເນື່ອງ.

ການຄອບຄອງດ້ວຍຄວາມບໍ່ບໍລິສຸດໃຈ ແມ່ນການຄອບຄອງ ໂດຍຮູ້ ຫຼື ຄວນຮູ້ວ່າ ຊັບສິ່ງຂອງທີ່ຕົນຄອບຄອງຢູ່ນັ້ນ ຍັງເປັນກຳມະສິດຂອງບຸກຄົນອື່ນ ຊຶ່ງສັນນິຖານໄດ້ຈາກການນຳໃຊ້ບໍ່ສະຫງົບ, ຢ່າງປິດລັບ ແລະ ບໍ່ຕໍ່ເນື່ອງ.

ຈຸດປະສົງ	ເພື່ອກຳນົດນິຍາມ ຂອງການຄອບຄອງຊັບສິ່ງຂອງດ້ວຍຄວາມບໍລິສຸດໃຈ ແລະ ການຄອບຄອງດ້ວຍຄວາມບໍ່ບໍລິສຸດໃຈ ຊຶ່ງລ້ວນແຕ່ຢູ່ໃນການຄອບຄອງ ໂດຍສື່ໃຫ້ເຫັນເຖິງຄວາມແຕກຕ່າງຢ່າງຈະແຈ້ງ ຂອງສອງກໍລະນີ.

ຕົວຢ່າງ	**1: ການຄອບຄອງດ້ວຍຄວາມບໍລິສຸດໃຈ:** **ຂ** ໄດ້ປອມແປງເອກະສານລົດ ທີ່ໄດ້ຢືມມາຈາກ **ກ** ແລ້ວນຳໄປຂາຍໃຫ້ **ຄ** ໂດຍບອກວ່າ ລົດເປັນຂອງຕົນເອງແລ້ວ **ຄ** ຈຶ່ງຊື້ ແລະ ຈ່າຍເງິນ ພ້ອມທັງໄດ້ຮັບເອົາລົດຄັນດັ່ງກ່າວ ກໍລະນີນີ້ **ຄ** ເປັນຜູ້ຄອບຄອງດ້ວຍຄວາມບໍລິສຸດໃຈ. **2: ການຄອບຄອງດ້ວຍຄວາມບໍ່ບໍລິສຸດໃຈ:** **ຂ** ໄດ້ນຳເອົາລົດທີ່ຕົນຢືມມາຈາກ **ກ** ນັ້ນ ໄປຂາຍໃຫ້ **ຄ** ໂດຍທີ່ **ຂ** ໄດ້ບອກວ່າ ລົດຄັນນັ້ນ ເປັນຂອງ **ຂ** ແຕ່ **ຄ** ກໍຮູ້ວ່າໃບທະບຽນລົດນັ້ນ ຍັງອອກຊື່ຂອງ **ກ** ແຕ່ **ຄ** ກໍຍັງຕົກລົງຊື້ ໃນລາຄາຖືກ, ໄດ້ຈ່າຍເງິນ ພ້ອມທັງຮັບເອົາຊັບດັ່ງກ່າວ ກໍລະນີນີ້ **ຄ** ເປັນຜູ້ຄອບຄອງດ້ວຍຄວາມບໍ່ບໍລິສຸດໃຈ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 58 ແລະ ມາດຕາ 59 ຂອງກົດໝາຍວ່າດ້ວຍກຳມະສິດ ເນື່ອງຈາກວ່າກົດໝາຍກຳນົດ ກ່ຽວກັບການຄອບຄອງຊັບດ້ວຍຄວາມບໍລິສຸດໃຈ, ຄວາມບໍ່ບໍລິສຸດໃຈໄວ້ ຊຶ່ງເຫັນວ່າບໍ່ມີມາດຕາ ທີ່ກຳນົດນິຍາມ ແລະ ຮູບການຄອບຄອງ ຈຶ່ງມີຄວາມຈຳເປັນທີ່ຈະຕ້ອງໄດ້ປັບປຸງເນື້ອໃນຂອງສອງມາດຕາດັ່ງກ່າວ ເພື່ອເປັນບ່ອນອີງໃນການກຳນົດຂໍ້ເທັດຈິງ ເຂົ້າໃນເຫດການຕ່າງໆ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 180,181, ແລະ184 ວັກ 4 ຂອງປະມວນກົດໝາຍແພ່ງ ຫວຽດນາມ 2015;
ມາດຕາອ້າງອີງ	ມາດຕາ 235 ແລະ 239 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 238 ການຄອບຄອງໂດຍຖືກຕ້ອງ ແລະ ບໍ່ຖືກຕ້ອງ

ການຄອບຄອງໂດຍຖືກຕ້ອງ ແມ່ນ ການຄອບຄອງຊັບສິ່ງຂອງ ໂດຍບຸກຄົນໃດໜຶ່ງ ທີ່ມີພື້ນຖານທາງດ້ານກົດໝາຍ.

ພື້ນຖານທາງດ້ານກົດໝາຍ ມີ ດັ່ງນີ້:

1. ນິຕິກຳ ເຊັ່ນ ສັນຍາ, ການເຮັດພິໄນກຳ;

2. ບົດບັນຍັດຂອງກົດໝາຍ ເຊັ່ນ ການຮັກສາຊັບສິ່ງຂອງທີ່ບໍ່ມີເຈົ້າຂອງ, ການເກັບຊັບສິ່ງຂອງທີ່ຕົກເຮ່ຍ, ການຄຸ້ມຄອງສັດ ທີ່ຂາດການຮັກສາ, ການພົບພໍ້ວັດຖຸທີ່ມີຄ່າ;

3. ກໍລະນີອື່ນທີ່ກົດໝາຍໄດ້ກຳນົດໄວ້.

ການຄອບຄອງໂດຍບໍ່ຖືກຕ້ອງ ແມ່ນ ການຄອບຄອງຊັບສິ່ງຂອງໂດຍບຸກຄົນໃດໜຶ່ງ ທີ່ບໍ່ມີພື້ນຖານທາງດ້ານກົດໝາຍ ຕາມທີ່ໄດ້ກຳນົດໄວ້ໃນວັກເທິງນີ້.

ຈຸດປະສົງ	ເພື່ອກຳນົດນິຍາມ ຂອງການຄອບຄອງໂດຍຖືກຕ້ອງ ແລະ ໂດຍບໍ່ຖືກຕ້ອງ ຊຶ່ງ ລ້ວນແຕ່ນອນຢູ່ໃນການຄອບຄອງ ໂດຍສື່ໃຫ້ເຫັນເຖິງຄວາມແຕກຕ່າງ ຂອງທັງສອງກໍລະນີ.

ຕົວຢ່າງ	**1 ການຄອບຄອງໂດຍຖືກຕ້ອງ:** **1.1: ການຄອບຄອງຕາມສັນຍາ** **ກ** ໄດ້ໄປເຊົ່າທີ່ດິນຂອງ **ຂ** ເພື່ອທຳການຜະລິດ ດັ່ງນັ້ນ **ກ** ຈຶ່ງມີສິດຄອບຄອງທີ່ດິນຂອງ **ຂ** ຕາມສັນຍາເຊົ່າ; **1.2: ການຄອບຄອງຕາມບົດບັດຍັດຂອງກົດໝາຍ** **ກ** ເກັບໄດ້ແຫວນຄຳ ໜຶ່ງວົງມີນ້ຳໜັກ ສອງບາດ ຫຼັງຈາກນັ້ນ **ກ** ໄດ້ໄປແຈ້ງຕໍ່ອົງການປົກຄອງບ້ານ ເພື່ອແຈ້ງຊອກຫາເຈົ້າຂອງ, ພາຍຫຼັງ ທີ່ **ກ** ໄດ້ແຈ້ງແລ້ວ ທາງຄະນະກຳມະການປົກຄອງບ້ານ ໄດ້ມອບແຫວນວົງດັ່ງກ່າວ ໃຫ້ **ກ** ສືບຕໍ່ຮັກສາ ເພື່ອລໍຖ້າເຈົ້າຂອງມາທວງທາວ. ດັ່ງນັ້ນ ໃນຊ່ວງໄລຍະເວລາທີ່ **ກ** ໄດ້ຮັກສາແຫວນວົງນັ້ນ **ກ** ຈຶ່ງເປັນຜູ້ຄອບຄອງໂດຍຖືກຕ້ອງຕາມບົດບັນຍັດຂອງກົດໝາຍ. **1.3: ການຄອບຄອງຕາມກໍລະນີອື່ນທີ່ກົດໝາຍໄດ້ກຳນົດໄວ້.** **ກ** ເປັນພະນັກງານຂອງລັດໄດ້ຄອບຄອງລົດ ທີ່ທາງການມອບໃຫ້ຂີ່ຕາມໜ້າທີ່ຕຳແໜ່ງຂອງ **ກ** . **2. ການຄອບຄອງໂດຍບໍ່ຖືກຕ້ອງ:** **2.1: ກ** ແລະ **ຂ** ມີທີ່ດິນຕິດກັນ ເວລາ **ກ** ລ້ອມຮົ້ວນັ້ນ **ກ** ໄດ້ລ້ອມຍັບເຂົ້າເອົາທີ່ດິນຂອງ **ຂ** ໄປ 3 ແມັດ ຖ້າອີງໃສ່ ຂອບເຂດເນື້ອທີ່ດິນຕາມໃບຕາດິນແລ້ວ **ກ** ກໍຮູ້ວ່າຕົນໄດ້ລ້ອມກວມເອົາທີ່ດິນຂອງ **ຂ** ໄປແລ້ວ ແຕ່ **ກ** ກໍຍັງສືບຕໍ່ຄອບຄອງຢູ່ ກໍລະນີນີ້ **ກ** ເປັນຜູ້ຄອບຄອງທີ່ດິນຂອງ **ຂ** ດ້ວຍຄວາມບໍ່ບໍລິສຸດໃຈ. **2.2: ກ** ເກັບໄດ້ໂທລະຊັບໜ່ວຍໜຶ່ງແຕ່ **ກ** ບໍ່ໄດ້ນຳເອົາໂທລະສັບໜ່ວຍນັ້ນໄປແຈ້ງ ຊຶ່ງ **ກ** ກໍຮູ້ດີວ່າໂທລະຊັບໜ່ວຍນັ້ນແມ່ນເປັນຂອງ **ຂ** ກໍລະນີນີ້ **ກ** ເປັນຜູ້ຄອບຄອງໂທລະຊັບຂອງ **ຂ** ດ້ວຍຄວາມບໍ່ບໍລິສຸດໃຈ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງໃໝ່ຍ້ອນວ່າ ກົດໝາຍວ່າດ້ວຍກຳມະສິດ ປີ 1990 ມາດຕາ 30 ໄດ້ກຳນົດກ່ຽວກັບການຄອບຄອງຊັບໂດຍຖືກຕ້ອງ ແຕ່ບໍ່ໄດ້ກຳນົດກ່ຽວກັບການຄອບຄອງທີ່ບໍ່ຖືກຕ້ອງ ດັ່ງນັ້ນ ຈຶ່ງເຫັນວ່າມີຄວາມຈຳເປັນທີ່ຕ້ອງໄດ້ກຳນົດຫຼັກການນີ້ຄືນໃໝ່ ຊຶ່ງການປັບປຸງມາດນີ້ ແມ່ນມີຄວາມສຳຄັນໃນການພັດທະນາທິດສະດີກົດໝາຍແພ່ງຂອງ ສປປ ລາວ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 189 ,190 , 191 ແລະ 196 ຂອງປະມວນກົດໝາຍແພ່ງ ຍີ່ປຸ່ນ; ມາດຕ 165 ຂອງປະມວນກົດໝາຍແພ່ງ ຫວຽດນາມ 2015.
ມາດຕາອ້າງອີງ	ມາດຕາ 235 ແລະ 237 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 239 ການສັນນິຖານກ່ຽວກັບການຄອບຄອງ ຫຼື ຜູ້ຄອບຄອງ

ການທີ່ບຸກຄົນໃດໜຶ່ງຄອບຄອງຊັບສິ່ງຂອງໃດໜຶ່ງ ໃຫ້ສັນນິຖານວ່າເປັນການຄອບຄອງ ຢ່າງເປີດເຜີຍ ແລະ ສະຫງົບ.

ການທີ່ບຸກຄົນໃດໜຶ່ງ ຫາກໄດ້ຄອບຄອງຊັບສິ່ງຂອງ ສອງໄລຍະ ຄື ໄລຍະເລີ່ມຕົ້ນ ແລະ ໄລຍະສຸດທ້າຍ ກໍ່ໃຫ້ສັນນິຖານວ່າ ເປັນການຄອບຄອງຢ່າງຕໍ່ເນື່ອງ.

ການທີ່ບຸກຄົນໃດໜຶ່ງຄອບຄອງຊັບສິ່ງຂອງໃດໜຶ່ງ ໃຫ້ສັນນິຖານວ່າເປັນການຄອບຄອງຖືກຕ້ອງ ແຕ່ໃນກໍລະນີຊັບສິ່ງຂອງ ຕ້ອງໄດ້ຂຶ້ນທະບຽນ ໃຫ້ສັນນິຖານວ່າບຸກຄົນຜູ້ມີຊື່ໃນໃບທະບຽນນັ້ນ ເປັນຜູ້ຄອບຄອງຖືກຕ້ອງ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນວ່າ ຈະມີການສັນນິຖານໄດ້ຄືແນວໃດ ຕໍ່ກັບຜົນຂອງການຄອບຄອງຂອງບຸກຄົນໃດໜຶ່ງ (ຄວາມສາມາດຂອງການສັນນິຖານ).
ຕົວຢ່າງ	**1. ການສັນນິຖານກ່ຽວກັບການຄອບຄອງ ຫຼື ຜູ້ຄອບຄອງ:** ເມື່ອເຫັນ **ກ** ຄອບຄອງຄອມພິມເຕີ 1 ໜ່ວຍ ໃຫ້ສັນນິຖານວ່າ **ກ** ໄດ້ຄອບຄອງຄອມພິມເຕີ້ໜ່ວຍນັ້ນຢ່າງເປີດເຜີຍ ແລະ ສະຫງົບ. **2. ການສັນນິຖານກ່ຽວກັບການຄອບຄອງຊັບສິ່ງຂອງເປັນສອງໄລຍະ:** **ກ** ໄດ້ຄອບຄອງທີ່ດິນໜຶ່ງຕອນ ມາຕັ້ງແຕ່ວັນທີ 1 ມີນາ 2000 ມາຮອດ ປີ 2010 **ກ** ໄດ້ຝາກທີ່ດິນຕອນນັ້ນໃຫ້ **ຂ** ຊ່ວຍຮັກສາ ຫຼື ຄອບຄອງໃຫ້ **ກ** ມາຮອດ ປີ 2015 **ກ** ຈຶ່ງກັບມາຄອບຄອງທີ່ດິນຕອນດັ່ງກ່າວອີກ ຈົນມາຮອດວັນທີ 1 ມີນາ 2020 ໃນກໍລະນີນີ້ໃຫ້ສັນນິຖານວ່າ **ກ** ເປັນຜູ້ຄອບຄອງທີ່ດິນຕອນດັ່ງກ່າວມາຢ່າງຕໍ່ເນື່ອງ ຄືແຕ່ ວັນທີ 1 ມີນາ 2000 ຮອດ ວັນທີ 1 ມີນາ 2020. **3. ການສັນນິຖານວ່າບຸກຄົນຜູ້ມີຊື່ໃນໃບທະບຽນເປັນຜູ້ຄອບຄອງຖືກຕ້ອງ:** **ກ** ໄດ້ນຳໃຊ້ລົດຈັກໜຶ່ງຄັນ ແຕ່ວ່າໃບທະບຽນ ຂອງລົດຈັກຄັນດັ່ງກ່າວ ແມ່ນ ອອກຊື່ **ຂ** ໃນກໍລະນີນີ້ ໃຫ້ສັນນິຖານວ່າ **ຂ** ແມ່ນຜູ້ຄອບຄອງທີ່ຖືກຕ້ອງ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງໃໝ່ ເນື່ອງຈາກວ່າກົດໝາຍວ່າດ້ວຍກຳມະສິດ ປີ 1990 ບໍ່ທັນ ໄດ້ກຳນົດ ຫຼັກການສັນນິຖານກ່ຽວກັບການຄອບຄອງ ຫຼື ຜູ້ຄອບຄອງ ຈຶ່ງມີຄວາມຫຍຸ້ງຍາກ ໃນການພິຈາລະນາແກ້ໄຂບັນຫາ ໃນກໍລະນີມີຂໍ້ຂັດແຍ່ງກ່ຽວກັບການຄອບຄອງ ດັ່ງນັ້ນ ຈຶ່ງມີຄວາມເປັນໃນການກຳນົດຫຼັກການດັ່ງກ່າວ ຊຶ່ງການກຳນົດເຂົ້າໃໝ່ ແມ່ນມີຄວາມສຳຄັນໃນການພັດທະນາທິດສະດີກົດໝາຍແພ່ງຂອງ ສປປ ລາວ ກ່ຽວກັບຫຼັກທິດສະດີຂອງການຄອບຄອງ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 2264 ຂອງປະມວນກົດໝາຍແພ່ງຝຣັ່ງ; ມາດຕາ 184 ຂອງປະມວນກົດໝາຍແພ່ງຫວຽດນາມ; ມາດຕາ 186 ຂອງປະມວນກົດໝາຍແພ່ງ ຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 235 ແລະ 237 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 240 ການຄອບຄອງຊັບສິ່ງຂອງຕາມການອະນຸຍາດພິເສດ

ວັດຖຸສິ່ງຂອງບາງປະເພດ ເຊັ່ນ ອາວຸດ, ທາດເບື້ອ, ບາງທາດໂລຫະທີ່ມີຄ່າ ຈະໃຫ້ບຸກຄົນໃດໜຶ່ງ ຄອບຄອງໄດ້ ກໍ່ຕໍ່ເມື່ອຫາກໄດ້ຮັບອະນຸຍາດພິເສດ ຈາກອົງການທີ່ມີສິດອຳນາດກ່ຽວຂ້ອງເທົ່ານັ້ນ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນວ່າ ການຄອບຄອງຊັບສິ່ງຂອງໂດຍຖືກຕ້ອງຕາມກົດໝາຍນັ້ນ ບາງກໍລະນີແມ່ນຈະຕ້ອງໄດ້ຮັບອະນຸຍາດພິເສດ ຈາກອົງການທີ່ມີສິດອຳນາດທີ່ກ່ຽວຂ້ອງ.
ຕົວຢ່າງ	**1. : ການຄອບຄອງ ອາວຸດ:** **ກ** ເປັນເຈົ້າໜ້າທີ່ຕຳຫຼວດ ແລະ ໄດ້ຮັບອະນຸຍາດຈາກກະຊວງປ້ອງກັນຄວາມສະຫງົບ ໃຫ້ **ກ** ມີສິດຖືອາວຸດປືນ ໂດຍມີບັດອະນຸຍາດຖືອາວຸດເສີກ. **2. : ການຄອບຄອງ ທາດເບື່ອ:** **ກ** ມີທະບຽນຂາຍເຄື່ອງກະເສດ ຫຼື ວັດສະດຸຮັບໃຊ້ວຽກງານກະສິກຳ ຊຶ່ງ **ກ** ໄດ້ນຳເຂົ້າສິນຄ້າປະເພດ ຢາຂ້າຫຍ້າ, ຢາປາບສັດຕູພືດ ແລະ ຢາເບື່ອໝູອື່ນໆ ກໍລະນີນີ້ **ກ** ມີສິດຄອບຄອງທາດເບື່ອດັ່ງກ່າວ ຕາມໃບທະບຽນວິສາຫະກິດ. **3. : ການຄອບຄອງ ບາງທາດໂລຫະທີ່ມີຄ່າ:** **ກ** ໄດ້ພົບເຫັນວັດຖຸບູຮານ ທີ່ເປັນພະພຸດທະຮູບຫຼໍ່ ຫຼື ເຮັດຂຶ້ນດ້ວຍໂລຫະ ທີ່ມີຄ່າ ຫຼັງຈາກນັ້ນ **ກ** ຈຶ່ງໄດ້ໄປຂໍອານຸຍາດຈາກກະຊວງຖະແຫຼງຂ່າວວັດທະນະທຳ ແລະ ທ່ອງທ່ຽວ ເພື່ອຂໍອານຸຍາດຄອບຄອງພະພຸດທະຮູບອົງນັ້ນ ແລ້ວ **ກ** ກໍຈຶ່ງໄດ້ຄອບຄອງພະພຸດທະຮູບອົງດັ່ງກ່າວ ຕາມການອານຸຍາດຈາກກະຊວງຖະແຫຼງຂ່າວ ແລະ ທ່ອງທ່ຽວ ວັດທະນະທຳ.
ເຫດຜົນໃນການຮັກສາ ເດີມ	ມາດຕານີ້ຮັກສາເດີມ ເນື້ອໃນຂອງມາດຕາ 31 ຂອງກົດໝາຍວ່າດ້ວຍກຳມະສິດ ປີ 1990.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 241 ໝາກຜົນທີ່ເກີດຈາກຊັບສິ່ງຂອງ ທີ່ຄອບຄອງໂດຍບໍ່ຖືກຕ້ອງ

ຜູ້ຄອບຄອງໂດຍບໍ່ຖືກຕ້ອງ ດ້ວຍຄວາມບໍລິສຸດໃຈ ຈະບໍ່ສົ່ງໝາກຜົນທີ່ເກີດຈາກຊັບສິ່ງຂອງ ໃຫ້ເຈົ້າກຳມະສິດແຕ່ຢ່າງໃດ, ເວັ້ນເສຍແຕ່ໝາກຜົນທີ່ເກີດຈາກຊັບສິ່ງຂອງ ຂອງລັດ ຫຼື ລວມໝູ່ນັ້ນ ຕ້ອງສົ່ງຄືນທັງໝົດ.

ສ່ວນໝາກຜົນທີ່ເກີດຈາກຊັບສິ່ງຂອງ ທີ່ຢູ່ໃນການຄອບຄອງຂອງບຸກຄົນໃດໜຶ່ງໂດຍບໍ່ຖືກຕ້ອງ ດ້ວຍຄວາມບໍ່ບໍລິສຸດໃຈນັ້ນ ຈະໄດ້ສົ່ງຄືນໃຫ້ເຈົ້າກຳມະສິດທັງໝົດ ລວມທັງໝາກຜົນທີ່ເກີດຈາກການນຳໃຊ້ຊັບສິ່ງຂອງດັ່ງກ່າວ. ໃນກໍລະນີທີ່ຜູ້ຄອບຄອງ ຫາກໄດ້ເອົາໝາກຜົນນັ້ນໄປນຳໃຊ້, ຂາຍ ແລະ ອື່ນໆ ທີ່ກໍໃຫ້ເກີດຄວາມເສຍຫາຍແກ່ເຈົ້າກຳມະສິດ ຜູ້ກ່ຽວກໍຈະໄດ້ໃຊ້ແທນຄ່າເສຍຫາຍ ຫຼື ມູນຄ່າຂອງໝາກຜົນນັ້ນໃຫ້ເຈົ້າກຳມະສິດ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນວ່າ ເມື່ອຜູ້ຄອບຄອງຊັບສິ່ງຂອງ ຂອງບຸກຄົນຜູ້ອື່ນ ໂດຍບໍ່ຖືກຕ້ອງດ້ວຍຄວາມບໍລິສຸດໃຈ ຫຼື ບໍ່ບໍລິສຸດໃຈນັ້ນໃນກໍລະນີນີ້ໝາກຜົນທີ່ໄດ້ຮັບມາຈາກຊັບສິ່ງຂອງທີ່ຄອບຄອງດັ່ງກ່າວ ຈະຕົກໄປຢູ່ນຳໃຜ ແລະ ສົ່ງຄືນແນວໃດ.

ຕົວຢ່າງ	**1. ໝາກຜົນທີ່ເກີດຈາກຊັບສິ່ງຂອງ ທີ່ຄອບຄອງໂດຍຖືກຕ້ອງ:** **ກ** ໄດ້ຝາກງົວແມ່ໂຕໜຶ່ງ ໃຫ້ **ຂ** ຮັກສາ ແຕ່ **ຂ** ໄດ້ເອົາງົວທີ່ **ກ** ຝາກນັ້ນໄປຂາຍໃຫ້ **ຄ** ໃນລາຄາ 3 ລ້ານກີບ ຊຶ່ງ **ຄ** ບໍ່ຮູ້ວ່າ ງົວໂຕນັ້ນ ເປັນຂອງ **ກ** ດັ່ງນັ້ນ **ຄ** ຈຶງຕົກລົງຊື້ ພາຍຫຼັງທີ່ **ຄ** ຊື້ໄດ້ມາ 6 ເດືອນ ງົວແມ່ໂຕນັ້ນໄດ້ເກີດລູກ. ຈາກນັ້ນ **ກ** ຜູ້ເປັນເຈົ້າກຳມະສິດເດີມໄດ້ມາທວງເອົາ ງົວແມ່ ນັ້ນຄືນ ພ້ອມດ້ວຍລູກງົວ. ກໍລະນີນີ້ **ຄ** ຈະຕ້ອງໄດ້ສົ່ງແຕ່ ງົວແມ່ໃຫ້ **ກ** ຜູ້ເປັນເຈົ້າຂອງເທົ່ານັ້ນ ສ່ວນລູກງົວແມ່ນ **ກ** ບໍ່ມີພັນທະສົ່ງຄືນ ໃຫ້ **ກ** ແຕ່ຢ່າງໃດ. **2. ໝາກຜົນທີ່ເກີດຈາກຊັບສິ່ງຂອງ ທີ່ຄອບຄອງໂດຍບໍ່ຖືກຕ້ອງ** **ກ** ໄດ້ຊື້ ງົວແມ່ໂຕໜຶ່ງ ຈາກ **ຂ** ໃນລາຄາ 2.500.000 ກີບ ດ້ວຍຄວາມບໍ່ບໍລິສຸດໃຈ ຍ້ອນ **ກ** ເອງກໍຮູ້ວ່າ ງົວແມ່ໂຕນັ້ນ ເປັນຂອງ **ຄ** ຕໍ່ມາ ງົວ ແມ່ໂຕດັ່ງກ່າວ ໄດ້ເກີດລູກ ແລ້ວໄດ້ມີ **ຄ** ມາທັກທວງເອົາ ງົວແມ່ນັ້ນຄືນພ້ອມດ້ວຍລູກ ງົວ ກໍລະນີນີ້ແມ່ນ **ກ** ຈະຕ້ອງໄດ້ສົ່ງ ທັງ ງົວ ແມ່ ແລະ ລູກ ງົວຄືນ ໃຫ້ແກ່ **ຄ** ທີ່ເປັນເຈົ້າກຳມະສິດເດີມ. ໃນກໍລະນີ **ກ** ໄດ້ເອົາລູກ ງົວ ໄປຂາຍ ຫຼື ຂ້າກິນແລ້ວ ຊຶ່ງເຮັດໃຫ້ບໍ່ສາມາດທີ່ຈະສົ່ງລູກງົວຄືນໄດ້ນັ້ນ, **ກ** ຕ້ອງທົດແທນຕາມມູນຄ່າຂອງລູກງົວ ນັ້ນຄືນໃຫ້ **ຄ.**
ເຫດຜົນໃນການປັບປຸງ	ມາດຕານີ້ ປັບປຸງມາຈາກ ມາດຕາ 60 ຂອງກົດໝາຍວ່າດ້ວຍກຳມະສິດປີ 1990 ເນື່ອງຈາກວ່າ ໄດ້ກຳນົດໝາກຜົນ ແລະ ລາຍໄດ້ຈາກການຄອບຄອງຢ່າງຜິດກົດໝາຍ ໂດຍກຳນົດກ່ຽວກັບໝາກຜົນທີ່ເກີດຈາກຊັບສິ່ງຂອງດ້ວຍຄວາມບໍ່ບໍລິສຸດໃຈກ່ອນແລ້ວ ຈຶ່ງກຳນົດຫຼັກການກ່ຽວກັບ ໝາກຜົນດ້ວຍຄວາມບໍລິສຸດໃຈ ຕາມຫຼັງເຫັນວ່າບໍ່ເໝາະສົມດັ່ງນັ້ນ,ຈຶ່ງໄດ້ປັບປຸງວິທີການຂຽນໂດຍເອົາຫຼັກການກ່ຽວກັບໝາກຜົນທີ່ຄອບຄອງຢ່າງຜິດກົດໝາຍ ດ້ວຍຄວາມບໍລິສຸດໃຈຂຶ້ນກ່ອນ ແລະ ຫຼັກການກ່ຽວກັບໝາກຜົນທີ່ເກີດຈາກການຄອງຄອງດ້ວຍຄວາມບໍ່ບໍລິສຸດໃຈຕາມຫຼັງ ເພື່ອໃຫ້ສອດຄ່ອງ ກັບຫຼັກການຂອງການຂຽນກົດໝາຍ, ນອກນັ້ນການກຳນົດມາດນີ້ເຂົ້າໃໝ່ ແມ່ນມີຄວາມສຳຄັນໃນການພັດທະນາທິດສະດີກົດໝາຍແພ່ງຂອງ ສປປ ລາວ ກ່ຽວກັບຫຼັກທິດສະດີຂອງການຄອບຄອງ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 189 ແລະ 190 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 235 ວັກ 2 ຂໍ້ 3 ແລະ 243 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 242 ການເຮັດໃຫ້ຊັບສິ່ງຂອງທີ່ຄອບຄອງໂດຍບໍ່ຖືກຕ້ອງຢູ່ໃນສະພາບເດີມ ແລະ/ຫຼືດີຂຶ້ນ

ບຸກຄົນໃດທີ່ຄອບຄອງຊັບສິ່ງຂອງໂດຍບໍ່ຖືກຕ້ອງ ດ້ວຍຄວາມບໍລິສຸດໃຈ ຫາກໄດ້ຟື້ນຟູຊັບສິ່ງຂອງທີ່ເສຍຫາຍ ຫຼື ເປ່ເພ ໃຫ້ຢູ່ໃນສະພາບເດີມ ມີສິດໄດ້ຮັບຄ່າໃຊ້ຈ່າຍທີ່ຕົນນຳໃຊ້ເຂົ້າໃນການຟື້ນຟູຊັບສິ່ງຂອງດັ່ງກ່າວ ຈາກເຈົ້າກຳມະສິດ.

ບຸກຄົນໃດທີ່ຄອບຄອງຊັບສິ່ງຂອງໂດຍບໍ່ຖືກຕ້ອງ ດ້ວຍຄວາມບໍລິສຸດໃຈ ຫາກໄດ້ເຮັດໃຫ້ຊັບສິ່ງຂອງດີຂຶ້ນ ມີສິດຮັບເອົາສິ່ງທີ່ຕົນໄດ້ເຮັດໃຫ້ດີຂຶ້ນນັ້ນໄວ້ ຖ້າການຕັດແຍກສິ່ງທີ່ເຮັດຂຶ້ນໃໝ່ນັ້ນ ຈະບໍ່ເຮັດໃຫ້ຊັບສິ່ງຂອງເດີມເສຍຫາຍ ຫຼື ເປ່ເພ ໃນເວລາຕັດແຍກອອກຈາກກັນ. ຖ້າຊັບສິ່ງຂອງທີ່ເຮັດຂຶ້ນໃໝ່ນັ້ນ ຫາກບໍ່ສາມາດຕັດແຍກອອກຈາກຊັບສິ່ງຂອງເດີມໄດ້ແລ້ວ, ຜູ້ຄອບຄອງຊັບສິ່ງຂອງໂດຍບໍ່ຖືກຕ້ອງນັ້ນ ກໍມີສິດທວງເອົາການໃຊ້ແທນຄ່າໃຊ້ຈ່າຍ ທີ່ຕົນໄດ້ເຮັດໃຫ້ຊັບສິ່ງຂອງດີຂຶ້ນນັ້ນ ຈາກເຈົ້າກຳມະສິດ ຕາມການໃຊ້ຈ່າຍຕົວຈິງ ແຕ່ບໍ່ໃຫ້ເກີນມູນຄ່າຂອງສ່ວນທີ່ເພີ່ມຂຶ້ນ ຂອງຊັບສິ່ງຂອງນັ້ນ.

ສຳລັບຊັບສິ່ງຂອງ ທີ່ຜູ້ຄອບຄອງໂດຍບໍ່ຖືກຕ້ອງ ດ້ວຍຄວາມບໍ່ບໍລິສຸດໃຈໄດ້ເຮັດໃຫ້ດີຂຶ້ນນັ້ນ ກໍຈະຕົກເປັນຂອງເຈົ້າກຳມະສິດ ໂດຍບໍ່ມີການທົດແທນແຕ່ຢ່າງໃດ.

ຈຸດປະສົງ	ເພື່ອຍົກໃຫ້ເຫັນວ່າ ຜູ້ຄອບຄອບຊັບສິ່ງຂອງ ຂອງຜູ້ອື່ນໂດຍບໍ່ຖືກຕ້ອງ ດ້ວຍຄວາມບໍລິສຸດໃຈ ຫຼື ບໍ່ບໍລິສຸດໃຈນັ້ນ, ຫາກໄດ້ຟື້ນຟູ ຫຼື ເຮັດໃຫ້ຊັບສິ່ງຂອງທີ່ຕົນຄອບຄອງນັ້ນດີຂຶ້ນ ໃນກໍລະນີນີ້ ເຮົາຈະສາມາດຮຽກຮ້ອງເອົາຄ່າໃຊ້ຈ່າຍທີ່ໄດ້ຈ່າຍໄປແລ້ວນັ້ນໄດ້ ຫຼື ບໍ, ພ້ອມທັງກຳນົດໃຫ້ເຫັນວ່າ ສ່ວນທີ່ເຮັດໃຫ້ດີຂຶ້ນນັ້ນ ຈະເປັນຂອງໃຜ ແລະ ຕ້ອງໄດ້ທົດແທນແນວໃດ.
ຕົວຢ່າງ	**1. : ການເຮັດໃຫ້ຊັບສິ່ງຂອງທີ່ຄອບຄອງໂດຍບໍ່ຖືກຕ້ອງ ຢູ່ໃນສະພາບເດີມ ແລະ/ຫຼື ດີຂຶ້ນ** **1.1 ກ** ໄດ້ລັກລົດຈັກ ຂອງ **ຂ** ແລ້ວ ນຳໄປຂາຍ ໃຫ້ **ຄ,** ໂດຍທີ່ **ຄ** ບໍ່ຮູ້ວ່າ ລົດຄັນດັ່ງກ່າວ ເປັນຂອງ **ຂ** ດັ່ງນັ້ນ **ຄ** ຈຶ່ງໄດ້ຕົກລົງຊື້, ພາຍຫຼັງທີ່ **ຄ** ຊື້ໄດ້ແລ້ວ ກໍນຳເອົາລົດທີ່ຊື້ນັ້ນໄປຊ້ອມແປງ ຊຶ່ງເຮັດໃຫ້ສະພາບຂອງລົດນັ້ນດີຂຶ້ນກວ່າເກົ່າ, ຕໍ່ມາ **ຂ** ຜູ້ເປັນເຈົ້າຂອງເດີມໄດ້ມາ ທວງທາວຄືນຈາກ **ຄ** ໃນກໍລະນີນີ້,**ຄ** ຕ້ອງໄດ້ສົ່ງລົດຄືນ ໃຫ້ **ຂ** ຜູ້ເປັນເຈົ້າຂອງ ແຕ່ **ຄ** ມີສິດທວງໃຫ້ **ຂ** ທົດແທນຄ່າໃຊ້ຈ່າຍທີ່ **ຄ** ໄດ້ຊ້ອມແປງ, ປັບປຸງສະພາບລົດໃຫ້ດີຂຶ້ນນັ້ນຄືນ. **1.2 ກ** ໄດ້ຊື້ສິດນຳໃຊ້ທີ່ດິນນຳ **ຂ** ພາຍຫຼັງທີ່ຊື້ໄປແລ້ວ **ກ** ໄດ້ທຳການປັບສະພາບຂອງໜ້າດິນ ດ້ວຍການເອົາດິນມາຖົມ, ປັບໜ້າດິນທີ່ເປັນຄອງນ້ຳ, ເປັນໂນນ ແລ້ວກໍກຳແພງອ້ອມ, ຊຶ່ງເຮັດໃຫ້ສະພາບຂອງທີ່ດິນຕອນນັ້ນມີລາຄາເພີ່ມຂຶ້ນ, ຕໍ່ມາ **ຄ** ຜູ້ເປັນເຈົ້າຂອງສິດນຳໃຊ້ທີ່ດິນ ໄດ້ມາທັກທວງເອົາທີ່ດິນຄືນ, **ກ** ຈຶ່ງຮູ້ວ່າທີ່ດິນຕອນນີ້ ແມ່ນ **ຂ** ໄດ້ປອມແປງເອກະສານມາຂາຍໃຫ້ຕົນ, ກໍລະນີນີ້, **ກ** ຕ້ອງໄດ້ສົ່ງທີ່ດິນຄືນໃຫ້ **ຄ,** ແຕ່ **ກ** ມີສິດທວງໃຫ້ **ຄ** ທົດແທນຄ່າໃຊ້ຈ່າຍຕ່າງໆທີ່ **ກ** ໄດ້ໃຊ້ຈ່າຍເຂົ້າໃນການປັບປຸງສະພາບທີ່ດິນ ແລະ ສິ່ງກໍ່ສ້າງຄືນໃຫ້ **ກ.**
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 61 ກົດໝາຍວ່າດ້ວຍ ກຳມະສິດ ປີ 1990 ຊຶ່ງອະທິບາຍເພີ່ມເຕີມ ເນື້ອໃນຂອງມາດຕາໃຫ້ເຂົ້າໃຈງ່າຍ ແລະ ມີເນື້ອໃນຄົບຖ້ວນກວ່າເກົ່າ. ການປັບປຸງເນື້ອໃນມາດນີ້ ແມ່ນມີຄວາມສຳຄັນໃນການພັດທະນາທົດສະດີກົດໝາຍແພ່ງຂອງ ສປປ ລາວ ໃຫ້ຄົບຖ້ວນ ເພື່ອເປັນບ່ອນອີງໃນການປະຕິບັດຕົວຈິງ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 196 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 243 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 243 ການສົ່ງຄືນຊັບສິ່ງຂອງທີ່ຄອບຄອງໂດຍບໍ່ຖືກຕ້ອງ

ຜູ້ຄອບຄອງສັງຫາລິມະຊັບໂດຍບໍ່ຖືກຕ້ອງ ດ້ວຍຄວາມບໍລິສຸດໃຈ ຕ້ອງສົ່ງສັງຫາລິມະຊັບທີ່ຕົນໄດ້ຄອບຄອງນັ້ນ ໃຫ້ເຈົ້າກຳມະສິດ ຖ້າຜູ້ກ່ຽວຫາກໄດ້ທວງເອົາຄືນ. ແຕ່ເຈົ້າກຳມະສິດ ຕ້ອງໄດ້ທົດແທນຄືນມູນຄ່າຂອງຊັບນັ້ນ ພ້ອມທັງຄ່າໃຊ້ຈ່າຍຕ່າງໆ ຈາກນັ້ນເຈົ້າກຳມະສິດ ຈຶ່ງທວງເອົາຄ່າທົດແທນໄປນັ້ນ ນຳຜູ້ມອບສັງຫາລິມະຊັບດັ່ງກ່າວ.

ຜູ້ຄອບຄອງອະສັງຫາລິມະຊັບໂດຍບໍ່ຖືກຕ້ອງ ດ້ວຍຄວາມບໍລິສຸດໃຈ ຕ້ອງສົ່ງອະສັງຫາລິມະຊັບທີ່ຕົນໄດ້ຄອບຄອງນັ້ນ ໃຫ້ເຈົ້າກຳມະສິດ ຖ້າຜູ້ກ່ຽວຫາກໄດ້ທວງເອົາຄືນ ໂດຍບໍ່ມີການທົດແທນຄືນແຕ່ຢ່າງໃດ. ແຕ່ສຳລັບຄ່າປົກປັກຮັກສາ ຫຼືຄ່າເຮັດໃຫ້ສະພາບອະສັງຫາລິມະຊັບດີຂຶ້ນນັ້ນ ສາມາດຮຽກຮ້ອງ

ການທົດແທນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 242 ວັກທີໜຶ່ງ ແລະ ວັກທີສອງ ຂອງປະມວນກົດໝາຍສະບັບນີ້ ແຕ່ຜູ້ຄອບຄອງມີສິດທວງເອົາມູນຄ່າອະສັງຫາລິມະຊັບ ຈາກຜູ້ມອບໃຫ້ຕົນ.

ສຳລັບຜູ້ຄອບຄອງທີ່ໄດ້ຮັບຊັບສິ່ງຂອງດ້ວຍການມອບ ຫຼື ການສືບທອດມູນມໍຣະດົກນັ້ນ ຈະບໍ່ມີການທົດແທນຄືນ.

ຜູ້ຄອບຄອງໂດຍບໍ່ຖືກຕ້ອງ ດ້ວຍຄວາມບໍ່ບໍລິສຸດໃຈ ຕ້ອງສົ່ງຊັບສິ່ງຂອງທັງໝົດນັ້ນຄືນໃຫ້ເຈົ້າກຳມະສິດ. ຜູ້ຄອບຄອງດັ່ງກ່າວ ຈະຕໍ່ວ່າເອົາການໃຊ້ແທນຄ່າເສຍຫາຍ ຈາກຜູ້ທີ່ໄດ້ມອບຊັບສິ່ງຂອງໃຫ້ຕົນ ໂດຍບໍ່ຖືກຕ້ອງນັ້ນກໍໄດ້ ແຕ່ບໍ່ມີສິດຮ້ອງຟ້ອງຕໍ່ສານ.

ຈຸດປະສົງ	ເພື່ອຍົກໃຫ້ເຫັນວ່າ ຜູ້ທີ່ໄດ້ຄອບຄອງຊັບສິ່ງຂອງ ຂອງຜູ້ອື່ນໂດຍບໍ່ຖືກຕ້ອງ (ບໍ່ມີພື້ນຖານທາງດ້ານກົດໝາຍ) ດ້ວຍຄວາມບໍລິສຸດໃຈ ຫຼື ບໍ່ບໍລິສຸດໃຈ ຖ້າເຈົ້າ ກຳມະສິດຫາກມາທວງເອົາຊັບສິ່ງຂອງນັ້ນຄືນ ໃນແຕ່ລະກໍລະນີ ເຈົ້າກຳມະສິດຈະມີພັນທະ ຫຼື ບໍ່ມີພັນທະ ຕ້ອງທົດແທນຄືນມູນຄ່າຂອງຊັບສິ່ງຂອງ ແລະ ຄ່າໃຊ້ຈ່າຍຕ່າງໆໃຫ້ແກ່ຜູ້ຄອບຄອງ.
ຕົວຢ່າງ	**1. ການສົ່ງຄືນສັງຫາລິມະຊັບສົ່ງຂອງທີ່ຄອບຄອງໂດຍບໍ່ຖືກຕ້ອງດ້ວຍຄວາມບໍລິສຸດໃຈ:** **1.1 ກ** ໄດ້ລັກ ງົວ ຂອງ **ຂ** ແລ້ວນຳໄປຂາຍໃຫ້ **ຄ,** ໂດຍທີ່ **ຄ** ບໍ່ຮູ້ວ່າ ງົວໂຕດັ່ງກ່າວແມ່ **ກ** ລັກມາ ແລ້ວ **ຄ** ຈຶ່ງໄດ້ຊື້, ຕໍ່ມາໄດ້ມີ **ຂ** ຜູ້ເປັນເຈົ້າກຳມະສິດເດີມ ໄດ້ມາທວງທາວເອົາງົວຄືນ, ດັ່ງນັ້ນ **ຄ** ຜູ້ຄອບຄອງ (ຜູ້ຊື້) ມີພັນທະຕ້ອງໄດ້ສົ່ງ ງົວ ໂຕນັ້ນຄືນໃຫ້ **ຂ** ຜູ້ເປັນເຈົ້າກຳມະສິດ, ແຕ່ **ຂ** ຕ້ອງໄດ້ທົດແທນຄ່າໃຊ້ຈ່າຍ ແລະ ມູນຄ່າຂອງ ງົວ ທີ່ **ຄ** ໄດ້ຊື້ນັ້ນຄືນ ໃຫ້ **ຄ** ແລ້ວ **ຂ** ຜູ້ເປັນເຈົ້າຂອງ ງົວ ນັ້ນຈຶ່ງໄປທວງເອົາເງິນທີ່ຈ່າຍໄປແລ້ວນັ້ນນຳ **ກ** ຜູ້ຂາຍ. **1.2 ກ** ໄດ້ລັກ ງົວ ຂອງ **ຂ** ແລ້ວນຳໄປຂາຍໃຫ້ **ຄ**, ໂດຍທີ່ **ຄ** ໄດ້ຊື້ ງົວ ໂຕນັ້ນມາດ້ວຍຄວາມບໍລິສຸດໃຈ, ຕໍ່ມາ **ຄ** ໄດ້ມອບ ງົວໂຕດັ່ງກ່າວໃຫ້ **ງ** ຜູ້ເປັນລູກ ເປັນເຈົ້າຂອງ (ຕາມມາດຕາ 418 ຂອງປະມວນກົດໝາຍແພ່ງ) ຕໍ່ມາ **ຂ** ຜູ້ເປັນເຈົ້າກຳມະສິດເດີມ ໄດ້ມາທວງທາວເອົາ ງົວ ຄືນ**, ງ** ຜູ້ຄອບຄອງມີພັນທະຕ້ອງໄດ້ສົ່ງ ງົວ ໂຕນັ້ນຄືນ ໃຫ້ **ຂ** ຜູ້ເປັນເຈົ້າກຳມະສິດ, ໂດຍທີ **ຂ** ບໍ່ຕ້ອງໄດ້ທົດແທນມູນຄ່າຂອງ ງົວ ນັ້ນ ຄືນໃຫ້ **ງ** ຜູ້ຄອບຄອງ, ແຕ່ **ງ** ມີສິດທວງຄ່າໃຊ້ຈ່າຍ ໃນການປົກປັກຮັກສາ ງົວ ໂຕນັ້ນ ໃຫ້ **ງ.** **1.3 ກ** ໄດ້ລັກ ງົວ ຂອງ **ຂ** ແລ້ວນຳໄປຂາຍໃຫ້ **ຄ,** ໂດຍທີ່ **ຄ** ກໍຮູ້ດີວ່າ ງົວໂຕດັ່ງກ່າວນັ້ນ ແມ່ນ **ກ** ລັກມາ, ແຕ່ **ຄ** ກໍຍັງຊື້ ແລະ ໄດ້ຈ່າຍເງິນໃຫ້ **ກ,** ພາຍຫຼັງທີ່ຊື້ໄປແລ້ວ **ຂ** ຜູ້ເປັນເຈົ້າກຳມະສິດເດີມ ໄດ້ມາທວງທາວເອົາງົວຄືນ, **ຄ** ຜູ້ຊື້ມີພັນທະຕ້ອງໄດ້ສົ່ງ ງົວ ໂຕນັ້ນຄືນ ໃຫ້ **ຂ** ຜູ້ເປັນເຈົ້າກຳມະສິດ, ໂດຍທີ **ຂ** ບໍ່ຕ້ອງໄດ້ທົດແທນມູນຄ່າຂອງ ງົວ ທີ່ໄດ້ຊື້ນັ້ນຄືນໃຫ້ **ຄ** ແລ້ວ **ຄ** ຜູ້ຊື້ນັ້ນຈຶ່ງໄປທວງເອົາເງິນທີ່ຈ່າຍໄປແລ້ວນັ້ນ ນຳ **ກ** ຜູ້ຂາຍ, ແຕ່ຖ້າວ່າ **ກ** ຜູ້ລັກ ງົວ ຫາກບໍ່ຈ່າຍນັ້ນ **ຄ** ຜູ້ຊື້ ກໍບໍ່ສາມາດຈະໄປຮ້ອງຟ້ອງຕໍ່ສານ. **2. ການສົ່ງຄືນອະສັງຫາລິມະຊັບທີ່ຄອບຄອງໂດຍບໍ່ຖືກຕ້ອງດ້ວຍຄວາມບໍລິສຸດໃຈ:**

	ກ ໄດ້ລັກປອມແປງເອກະສານ ສິດນຳໃຊ້ທີ່ດິນ ຂອງ **ຂ** ແລ້ວນຳໄປຂາຍ ໃຫ້ **ຄ** ຕໍ່ມາ **ຂ** ຜູ້ເປັນເຈົ້າຂອງສິດນຳໃຊ້ທີ່ດິນ ໄດ້ມາທວງເອົາທີ່ດິນຄືນ **ຄ** ຜູ້ຊື້ຕ້ອງໄດ້ສົ່ງທີ່ດິນຄືນ ໃຫ້ **ຂ**, ແຕ່ **ຄ** ມີສິດທວງເອົາຄ່າປົກປັກຮັກສາ, ຄ່າໃຊ້ຈ່າຍໃນການປັບປຸງທີ່ດິນ ເພື່ອເຮັດໃຫ້ສະພາບຂອງທີ່ດິນດີຂຶ້ນນັ້ນ ແລະ ຄ່າເສຍຫາຍອື່ນໆນຳ **ຂ** ຖ້າມີ, (ຕາມມາດຕາ 242 ວັກ 1 ແລະ 2 ຂອງປະມວນກົດໝາຍແພ່ງ) ສ່ວນຄ່າຊື້ທີ່ດິນນັ້ນ ແມ່ນໃຫ້ **ຄ** ຜູ້ຊື້ ຈຶ່ງໄປທວງນຳ **ກ** ຜູ້ຂາຍ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 42 ແລະ ມາດຕາ 58 ຂອງກົດໝາຍວ່າດ້ວຍກຳມະສິດ ປີ 1990 ເນື່ອງຈາກว่า ບໍ່ໄດ້ກຳນົດລະອຽດກ່ຽວກັບກໍລະນີ ຜູ້ທີ່ໄດ້ຄອບຄອງຊັບສິ່ງຂອງ ຂອງບຸກຄົນອື່ນໂດຍບໍ່ຖືກຕ້ອງ ບໍ່ວ່າດ້ວຍຄວາມບໍລິສຸດໃຈ ຫຼື ບໍ່ບໍລິສຸດໃຈ ຖ້າເຈົ້າກຳມະສິດຫາກມາທວງເອົາຊັບສິ່ງຂອງດັ່ງກ່າວຄືນແລ້ວ ເຈົ້າກຳມະສິດຜູ້ທວງຈະມີພັນທະ ຫຼື ບໍ່ມີພັນທະຕ້ອງໄດ້ຈ່າຍທົດແທນມູນຄ່າຂອງຊັບ ກໍຄືຄ່າໃຊ້ຈ່າຍຕ່າງໆຄືນ ໃຫ້ຜູ້ຄອບຄອງ ຊຶ່ງໃນສອງມາດຕານີ້ ໄດ້ກຳນົດພຽງແຕ່ຫຼັກການລວມ ຊຶ່ງບໍ່ໄດ້ແຍກລະອຽດ ກ່ຽວກັບລະບຽບຂອງການສົ່ງຊັບຄືນໃນກໍລະນີຂອງການຄອບຄອງສັງຫາລິມະຊັບ ແລະ ອະສັງຫາລິມະຊັບ ດັ່ງນັ້ນ ຈຶ່ງໄດ້ປັບປຸງມາດຕານີ້ ເພື່ອຍົກໃຫ້ເຫັນຢ່າງຈະແจ້ງຄື: ໃນກໍລະນີຊັບນັ້ນເປັນສັງຫາລິມະຊັບກັບອະສັງຫາລິມະຊັບ, ກໍລະນີບໍລິສຸດໃຈ ແລະ ບໍ່ບໍລິສຸດໃຈ, ກໍລະນີທີ່ໄດ້ມາຈາກການ ຊື້ການມອບ ແລະ ການສືບທອດມູນມໍຣະດົກ ເພື່ອໃຫ້ສະດວກໃນການຈັດຕັ້ງປະຕິບັດ ຊຶ່ງການປັບປຸງເນື້ອໃນມາດນີ້ ແມ່ນມີຄວາມສຳຄັນຫຼາຍ ໃນການພັດທະນາລະບົບກົດໝາຍແພ່ງຂອງ ສປປລາວ ໃຫ້ຊອດຄ່ອງກັບສະພາບ ຈຸດພິເສດ ແລະ ບ່ອນອີງໃນການປະຕິບັດຕົວຈິງ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 2277 ຂອງປະມວນກົດໝາຍແພ່ງຝຣັ່ງ.
ມາດຕາອ້າງອີງ	ມາດຕາ 242 ແລະ 409 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 244 ຄວາມຮັບຜິດຊອບຂອງຜູ້ຄອບຄອງຊັບສິ່ງຂອງໂດຍບໍ່ຖືກຕ້ອງ

ຜູ້ຄອບຄອງຊັບສິ່ງຂອງໂດຍບໍ່ຖືກຕ້ອງດ້ວຍຄວາມບໍລິສຸດໃຈ ບໍ່ມີຄວາມຮັບຜິດຊອບຕໍ່ຄວາມເສຍຫາຍ ຫຼື ເປ່ເພ ຂອງຊັບສິ່ງຂອງທີ່ຕົນຄອບຄອງ. ໃນກໍລະນີທີ່ຜູ້ກ່ຽວຫາກໄດ້ຮັບຜົນປະ�โຫຍດຈາກຄວາມເສຍຫາຍດັ່ງກ່າວ ຕ້ອງມອບຜົນປະ�โຫຍດທີ່ຍັງມີຢູ່ນັ້ນ ໃຫ້ເຈົ້າກຳມະສິດ. ສຳລັບຄ່າເສຍຫາຍຕໍ່ຊັບສິ່ງຂອງ ຂອງລັດ ຫຼື ລວມໝູ່ນັ້ນ, ຜູ້ກ່ຽວຕ້ອງຮັບຜິດຊອບ.

ຜູ້ຄອບຄອງຊັບສິ່ງຂອງໂດຍບໍ່ຖືກຕ້ອງ ດ້ວຍຄວາມບໍ່ບໍລິສຸດໃຈ ຕ້ອງໄດ້ໃຊ້ແທນຄ່າເສຍຫາຍທັງໝົດ ແກ່ເຈົ້າກຳມະສິດ ລວມທັງໝາກຜົນ ກໍຄືສ່ວນອື່ນທີ່ຜູ້ກ່ຽວເຮັດໃຫ້ຊັບສິ່ງຂອງນັ້ນດີຂຶ້ນ ຖ້າຫາກຊັບສິ່ງຂອງນັ້ນຖືກ ເສຍຫາຍ ຫຼື ເປ່ເພ ຍ້ອນຄວາມຜິດຂອງຜູ້ກ່ຽວ.

ຈຸດປະສົງ	ເພື່ອຍົກໃຫ້ເຫັນ ກ່ຽວກັບກໍລະນີຜູ້ທີ່ໄດ້ຄອບຄອງຊັບສິ່ງຂອງ ຂອງຜູ້ອື່ນໂດຍບໍ່ຖືກຕ້ອງ ດ້ວຍຄວາມບໍລິສຸດໃຈ ຫຼື ບໍ່ບໍລິສຸດໃຈ ຫາກໄດ້ເຮັດໃຫ້ຊັບສິ່ງຂອງດັ່ງກ່າວເສຍຫາຍ ຫຼື ເປ່ເພ ຊຶ່ງໃນກໍລະນີນີ້ ຜູ້ກ່ຽວຈະມີຄວາມຮັບຜິດຊອບ ຫຼື ບໍ່ມີ ໃນການໃຊ້ແທນຄວາມເສຍຫາຍໃຫ້ແກ່ ເຈົ້າກຳມະສິດ.

ຕົວຢ່າງ	**1. ກໍລະນີບໍລິສຸດໃຈ:** **ກ** ໄດ້ຊື້ ງົວ ໜຶ່ງໂຕ ຈາກ **ຂ** ເພື່ອເອົາມາລ້ຽງ ຊຶ່ງໃນເວລາຊື້ນັ້ນ **ກ** ບໍ່ຮູ້ວ່າ ງົວໂຕດັ່ງກ່າວນັ້ນ **ຂ** ລັກມາຂາຍໃຫ້ຕົນ, **ກ** ຈຶ່ງໄດ້ຊື້ ແລະ ຈ່າຍເງິນໃຫ້ **ຂ** ຕໍ່ມາ ງົວ ໂຕນັ້ນໄດ້ເກີດພະຍາດ ຕາຍ ຫຼັງຈາກນັ້ນໄດ້ມີ **ຄ** ມາທວງເອົາ ງົວ ໂຕດັ່ງກ່າວຄືນນຳ **ກ** ກໍລະນີນີ້ **ກ** ຈະບໍ່ມີຄວາມຮັບຜິດຊອບໃນການສົ່ງ ຫຼື ໃຊ້ແທນຄ່າ ງົວໂຕດັ່ງກ່າວຄືນໃຫ້ **ຄ.** **ກ** ໄດ້ຊື້ ງົວໜຶ່ງໂຕຈາກ **ຂ** ໃນລາຄາ 3,000,000 ກີບ ໂດຍທີ່ **ກ** ບໍ່ຮູ້ວ່າ ງົວໂຕດັ່ງກ່າວນັ້ນ **ຂ** ລັກມາຂາຍໃຫ້ຕົນ ແລ້ວ **ກ** ຈຶ່ງຊື້ ແລະ ຈ່າຍເງິນໃຫ້ **ຂ** ໄປ, ພາຍຫຼັງທີ່ **ກ** ຊື້ໄດ້ມາ **ກ** ໄດ້ນຳເອົາ ງົວໂຕນັ້ນ ໄປຂາຍ ໃຫ້ໂຮງຂ້າສັດໃນລາຄາ 4,000,000 ກີບ ຕໍ່ມາໄດ້ມີ **ຄ** ມາທວງເອົາງົວ ຄືນ ກໍລະນີນີ້ **ກ** ຈະມີພັນທະສົ່ງກຳໄລ ທີ່ໄດ້ຈາກການຂາຍ ງົວ ນັ້ນ ຄື 4,000,000 ກີບ ໃຫ້ **ຄ** ຜູ້ເປັນເຈົ້າຂອງເດີມ ແຕ່ **ຄ** ຕ້ອງໄດ້ຈ່າຍຄ່າ ງົວທີ່ **ກ** ໄດ້ຈ່າຍໃນເບື້ອງຕົ້ນນັ້ນຄືນໃຫ້ **ກ** ຄື 3,000,000 ກີບ (ຕາມມາດຕາ 243 ວັກ 1 ຂອງປະມວນກົດໝາຍແພ່ງ). **2. ກໍລະນີບໍ່ບໍລິສຸດໃຈ:** ຖ້າຫາກວ່າ **ກ** ຜູ້ຊື້ຮູ້ດີວ່າ ງົວ ໂຕທີ່ຊື້ນັ້ນ ແມ່ນ **ຂ** ລັກມາ ແຕ່ **ກ** ກໍຍັງ ຮັບຊື້ ໃນລາຄາ 3,000,000 ກີບ ເພື່ອຂາຍຕໍ່ໃຫ້ໂຮງຂ້າສັດ, ກິນກຳໄລ ກໍລະນີນີ້ແມ່ນ **ກ** ຕ້ອງໄດ້ສົ່ງ ເງິນທັງໝົດ ທີ່ໄດ້ມາຈາກການຂາຍງົວໂຕນັ້ນ ຄືນໃຫ້ **ຄ** ຜູ້ເປັນເຈົ້າຂອງເດີມ. ສ່ວນ **ກ** ກໍສາມາດໄປທວງ ຫຼື ຕໍ່ວ່າເອົາການ ໃຊ້ແທນຄ່າເສຍຫາຍ ຫຼື ຄ່າຊື້ ງົວໃນເບື້ອງຕົ້ນຄື ຈຳນວນເງິນ 3,000,000 ກີບ ຈາກ **ຂ** ກໍໄດ້, ແຕ່ຖ້າຫາກວ່າ **ຂ** ບໍ່ຍອມສົ່ງ **ກ** ກໍບໍ່ມີສິດຮ້ອງຟ້ອງ **ຂ** ຕໍ່ສານ. (ຕາມມາດຕາ 243 ວັກ 4 ຂອງປະມວນກົດໝາຍແພ່ງ).
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 58, 59 ແລະ 60 ຂອງກົດໝາຍວ່າດ້ວຍ ກຳມະສິດ ປີ 1990 ເນື່ອງຈາກວ່າຍັງບໍ່ທັນໄດ້ກຳນົດລະອຽດ ກ່ຽວກັບແຕ່ລະກໍລະນີ ໃນຄວາມຮັບຜິດຊອບຂອງຜູ້ຄອບຄອງຊັບສົ່ງຂອງໂດຍບໍ່ຖືກຕ້ອງ ດ້ວຍຄວາມ ບໍລິສຸດໃຈ, ດັ່ງນັ້ນຈຶ່ງໄດ້ປັບປຸງມາດຕານີ້ ເພື່ອອະທິບາຍກ່ຽວກັບຄວາມຮັບ ຜິດຊອບ ຕໍ່ຄວາມເສຍຫາຍ ຫຼື ເປ່ເພຂອງຊັບສົ່ງຂອງທີ່ຕົນຄອບຄອງ. ການ ປັບປຸງເນື້ອໃນມາດນີ້ ແມ່ນມີຄວາມສຳຄັນໃນການພັດທະນາທິດສະດີກົດໝາຍ ແພ່ງຂອງ ສປປ ລາວ ໃຫ້ຄົບຖ້ວນ ເພື່ອເປັນບ່ອນອີງໃນການປະຕິບັດຕົວຈິງ.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງ ຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 241,242 ແລະ 243 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 245 ການປ່ຽນການຄອບຄອງ

ການປ່ຽນການຄອບຄອງ ເກີດຂຶ້ນໃນກໍລະນີ ດັ່ງນີ້:

1. ເມື່ອຜູ້ຄອບຄອງໃໝ່ຮັບຊັບສົ່ງຂອງຕົວຈິງ ຂອງຜູ້ຄອບຄອງເກົ່າ;
2. ຕາມການຕົກລົງກັນ ລະຫວ່າງຜູ້ຄອບຄອງເກົ່າ ແລະ ຜູ້ຄອບຄອງໃໝ່ ໃນກໍລະນີ ດັ່ງນີ້:
   - ເມື່ອຊັບສົ່ງຂອງໄດ້ຢູ່ນຳຜູ້ຄອບຄອງໃໝ່ ມາກ່ອນແລ້ວ;
   - ເມື່ອຊັບສົ່ງຂອງຍັງຢູ່ນຳຜູ້ຄອບຄອງເກົ່າ;
   - ເມື່ອຊັບສົ່ງຂອງຍັງຢູ່ນຳບຸກຄົນທີສາມ ແຕ່ຕ້ອງແຈ້ງໃຫ້ຜູ້ຄອບຄອງໃໝ່ຊາບ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນ ເຖິງເງື່ອນໄຂ ກ່ຽວກັບກໍລະນີທີ່ບຸກຄົນໜຶ່ງ ຄອບຄອງ ຊັບສິ່ງ ຂອງໃດໜຶ່ງຢູ່ ຊຶ່ງຜູ້ຄອບຄອງດັ່ງກ່າວນັ້ນ ຈະປ່ຽນການຄອບຄອງຈາກ ບຸກຄົນ ໜຶ່ງໄປຫາອີກບຸກຄົນອື່ນໄດ້ ໃນກໍລະນີໃດແດ່.
ຕົວຢ່າງ	**1. ເມື່ອຜູ້ຄອບຄອງໃໝ່ຮັບຊັບສິ່ງຂອງຕົວຈິງ ຂອງຜູ້ຄອບຄອງເກົ່າ:** **ກ** ໄດ້ມອບລົດຈັກໜຶ່ງຄັນ ໃຫ້ **ຂ** ແລະ **ຂ** ກໍໄດ້ຮັບເອົາແລ້ວ ກໍລະນີນີ້ຖືວ່າການຄອບຄອງແມ່ນໄດ້ປ່ຽນ ນັບແຕ່ ເວລາທີ່ **ຂ** ໄດ້ຮັບລົດຈັກຕົວຈິງ ຈາກ **ກ** ເປັນຕົ້ນໄປ; **2. ເມື່ອຊັບສິ່ງຂອງໄດ້ຢູ່ນຳຜູ້ຄອບຄອງໃໝ່ ມາກ່ອນແລ້ວ;** **ກ:** ມີທີ່ທີ່ດິນໜຶ່ງຕອນ ມີເນື້ອທີ 1 ເຮັກຕ່າ **ກ** ໄດ້ໃຫ້ **ຂ** ຢືມ ຫຼື ເຊົ່າ ເພື່ອທຳການຜະລິດ ຕໍ່ມາ **ກ** ໄດ້ຕົກລົງມອບການຄອບຄອງທີ່ດິນຕອນດັ່ງກ່າວ ໃຫ້ **ຂ** ເປັນຜູ້ມີສິດຄອບຄອງຕໍ່ ກໍລະນີນີ້ ຖືວ່າ **ຂ** ໄດ້ເປັນຜູ້ຄອບຄອງ ແມ່ນ ນັບແຕ່ມື້ທີ່ **ກ** ໄດ້ຕົກລົງມອບການຄອບຄອງໃຫ້ **ຂ** ເປັນຕົ້ນໄປ. **3. ເມື່ອຊັບສິ່ງຂອງຍັງຢູ່ນຳຜູ້ຄອບຄອງເກົ່າ;** **ກ** ໄດ້ສິດຄອບຄອງທີ່ດິນໜຶ່ງຕອນ ມາເປັນເວລາຫຼາຍປີມາແລ້ວ ຕໍ່ມາ **ກ** ໄດ້ຕົກລົງມອບ ຫຼື ໂອນສິດຄອບຄອງທີ່ດິນຕອນດັ່ງກ່າວໃຫ້ **ຂ** ເປັນຜູ້ ມີສິດຄອບຄອງຕໍ່ ແຕ່ **ກ** ກໍຍັງໄດ້ສືບຕໍ່ຄອບຄອງ ເພື່ອເກັບກ່ຽວຜົນລະປູກ ກໍລະນີນີ້ **ຂ** ໄດ້ສິດຄອບຄອງ ແມ່ນນັບແຕ່ເວລາທີ່ **ກ** ໄດ້ຕົກລົງມອບ ຫຼື ໂອນສິດຄອບຄອງ ໃຫ້ **ຂ** ເປັນຕົ້ນໄປ. **4. ເມື່ອຊັບສິ່ງຂອງຍັງຢູ່ນຳບຸກຄົນທີສາມແຕ່ຕ້ອງແຈ້ງໃຫ້ຜູ້ຄອບ ຄອງໃໝ່ຊາບ.** **ກ** ໄດ້ ຄອບຄອງທີ່ດິນໜຶ່ງຕອນເປັນເວລາ 10 ປີມາແລ້ວ, ແຕ່ທີ່ດິນ ຕອນດັ່ງກ່າວ **ກ** ໄດ້ໃຫ້ **ຂ** ເຊົ່າ ເພື່ອເຮັດນາ. ຕໍ່ມາ **ກ** ໄດ້ຕົກລົງມອບ ຫຼື ໂອນສິດຄອບຄອງທີ່ດິນຕອນດັ່ງກ່າວ ໃຫ້ **ຄ** ຄອບຄອງຕໍ່ ກໍລະນີນີ້ ຖືວ່າ **ຄ** ເປັນຜູ້ຄອບຄອງໃໝ່ ແມ່ນນັບແຕ່ມື້ທີ່ **ກ** ໄດ້ຕົກລົງມອບການຄອບຄອງໃຫ້ **ຄ** ແລະ **ຄ** ກໍໄດ້ຮັບ ເປັນຕົ້ນໄປ, ແຕ່ **ກ** ຕ້ອງແຈ້ງໃຫ້ **ຂ** ຜູ້ເຊົ່າຊາບ ກ່ຽວກັບການປ່ຽນສິດຄອບຄອງ ຈາກ **ກ** (ຜູ້ເກົ່າ) ໄປຫາ **ຄ** (ຜູ້ໃໝ່) ໃຫ້ **ຂ** ຮູ້ພາຍຫຼັງ. ໂດຍແມ່ນ **ຄ** ເປັນຜູ້ຄອບຄອງໂດຍທາງອອ້ມ, ສ່ວນ **ຂ** ກໍຍັງເປັນຜູ້ຄອບຄອງໂດຍທາງກົງ (ມາດຕາ 236 ຂອງປະມວນກົດໝາຍແພ່ງ)
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງໃໝ່ຍ້ອນວ່າ ມາດຕາ 28 ແລະ 29 ຂອງກົດໝາຍວ່າດ້ວຍກຳ ມະສິດ ປີ 1990 ບໍ່ໄດ້ກຳນົດຫຼັກການ ກ່ຽວກັບການປ່ຽນການຄອບຄອງ ຈຶ່ງເຮັດໃຫ້ ການປ່ຽນການຄອບຄອງໃນໄລຍະຜ່ານມາ ມີຄວາມຍຸ້ງຍາກ, ບໍ່ມີບ່ອນອີງ, ສະນັ້ນຈຶ່ງ ມີຄວາມຈຳເປັນກຳນົດຫຼັກການດັ່ງກ່າວໃສ່ໃໝ່. ການ ກຳນົດເນື້ອໃນມາດນີ້ຂຶ້ນມາໃໝ່ນັ້ນ ແມ່ນມີຄວາມສຳຄັນ ໃນການພັດທະນາ ທິດສະດີກົດໝາຍແພ່ງຂອງ ສປປ ລາວ ໃຫ້ຄົບຖ້ວນ.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງ ຂອງປະເທດອື່ນ	ມາດຕາ 182, 183, ແລະ 184 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 294, 295, 296 ແລະ 297 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 246 ການປົກປ້ອງການຄອບຄອງ

ຜູ້ຄອບຄອງຊັບສິ່ງຂອງໂດຍຖືກຕ້ອງ ຫຼື ບໍ່ຖືກຕ້ອງ ດ້ວຍຄວາມບໍລິສຸດໃຈ ມີສິດທວງເອົາ ຊັບສິ່ງຂອງຄືນ, ໃຫ້ຢຸດເຊົາການກີດຂວາງ, ໃຫ້ລົບລ້າງອຸປະສັກທີ່ເກີດຂຶ້ນ ຫຼື ຈະເກີດຂຶ້ນໃນຕໍ່ໜ້າ.

ຜູ້ຄອບຄອງຊັບສິ່ງຂອງດັ່ງກ່າວ ສາມາດຮ້ອງຂໍໃຫ້ອົງການທີ່ກ່ຽວຂ້ອງ ພິຈາລະນາກ່ຽວກັບການ ປົກປ້ອງການຄອບຄອງຂອງຕົນ ພາຍໃນເວລາ ໜຶ່ງປີ ນັບແຕ່ເວລາ ທີ່ໄດ້ມີ ການລະເມີດ ຫຼື ການໂຕ້ແຍ່ງ ເປັນຕົ້ນໄປ.

ສຳລັບອຸປະສັກທີ່ຈະເກີດຂຶ້ນໃນຕໍ່ໜ້ານັ້ນ ສາມາດຮ້ອງຂໍໄດ້ທຸກເວລາ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນວ່າ ຜູ້ຄອບຄອງຊັບສິ່ງຂອງສາມາດໄດ້ຮັບການປົກປ້ອງຄືແນວໃດ ໃນກໍລະນີທີ່ຖືກຜູ້ອື່ນມາຊິງຊັບສິ່ງຂອງທີ່ຕົນຄອບຄອງ ຫຼື ກໍລະນີມີການກີດຂວາງການຄອບຄອງ ຫຼື ໄພອັນຕະລາຍທີ່ອາດຈະເກີດຂຶ້ນໃນຕໍ່ໜ້າ.
ຕົວຢ່າງ	**1. ສິດທວງເອົາຊັບສິ່ງຂອງຄືນຂອງຜູ້ຄອບຄອງຊັບດ້ວຍຄວາມບໍລິສຸດໃຈ:** **ກ** ໄດ້ຢືມລົດ ຂອງ **ຂ** ມານຳໃຊ້, ຕໍ່ມາ **ຄ** ໄດ້ມາລັກລົດຄັນດັ່ງກ່າວ, ພຽງແຕ່ **ກ** ສາມາດກ່າວອ້າງ ແລະ ພິສູດໄດ້ວ່າ **ຄ** ໄດ້ລັກເອົາລົດທີ່ຕົນຄອບຄອງຢູ່ນັ້ນ **ກ** ກໍສາມາດທວງເອົາລົດຄືນຈາກ **ຄ** ໄດ້ ແລະ **ກ** ສາມາດຮ້ອງຂໍໃຫ້ອົງການທີ່ກ່ຽວຂ້ອງ ພິຈາລະນາ ກ່ຽວກັບການປົກປ້ອງສິດຂອງຕົນ ພາຍໃນກຳນົດເວລາໜຶ່ງປີ ນັບແຕ່ວັນທີ່ **ຄ** ໄດ້ມີການລະເມີດ ຫຼື ການໂຕ້ແຍ່ງ ສິດຂອງ **ກ** ເປັນຕົ້ນໄປ. **2. ສິດທວງໃຫ້ຢຸດເຊົາການກີດຂວາງ ຂອງຜູ້ຄອບຄອງຊັບດ້ວຍຄວາມບໍລິສຸດໃຈ:** **ກ** ໄດ້ເຊົ່າທີ່ດິນຂອງ **ຂ** ເພື່ອປູກສາລີ, ຊຶ່ງທາງທີ່ **ກ** ໄດ້ທຽວໄປສວນທຸກມື້ນັ້ນ **ຄ** ໄດ້ມາລ້ອມຮົ້ວຕັນທາງທຽວໄປສວນຂອງ **ກ** ໃນກໍລະນີນີ້ **ກ** ສາມາດນຳໃຊ້ສິດທວງ, ໃຫ້ **ຄ** ຢຸດເຊົາການກີດຂວາງທາງທຽວຂອງ **ກ** ຫຼື ອາດທຳການຮ້ອງຂໍ ຫຼື ຮ້ອງຟ້ອງໄປຫາອົງການທີ່ກ່ຽວຂ້ອງ ພິຈາລະນາ ກ່ຽວກັບການປົກປ້ອງສິດຂອງຕົນ ພາຍໃນກຳນົດເວລາ ໜຶ່ງປີ ນັບແຕ່ວັນ ທີ່ **ຄ** ໄດ້ມີການລະເມີດ ຫຼື ການໂຕ້ແຍ່ງ ສິດຂອງ **ກ** ເປັນຕົ້ນໄປ. **3. ສິດທວງໃຫ້ລົບລ້າງອຸປະສັກທີ່ເກີດຂຶ້ນ ຫຼື ຈະເກີດຂຶ້ນໃນຕໍ່ໜ້າ:** **ກ** ໄດ້ເຊົ່າທີ່ດິນຂອງ **ຂ** ມີເນື້ອທີ່ປະມານ ສອງເຮັກຕາ ເພື່ອເຮັດທຸລະກິດລ້ຽງປາ, ຕໍ່ມາ **ຄ** ທີ່ຢູ່ເທິງຕົ້ນນ້ຳໄດ້ຕັ້ງໂຮງງານ ແລ້ວໄດ້ປ່ອຍນ້ຳເສຍອອກຈາກໂຮງງານ ລົງໃສ່ຫ້ວຍນ້ຳທີ່ໄຫຼຜ່ານ ໝອງປາຂອງ **ກ** ດັ່ງນັ້ນ **ກ** ມີສິດຮ້ອງຂໍໃຫ້ **ຄ** ເຈົ້າຂອງບໍລິສັດຢຸດເຊົາການປ່ອຍນ້ຳເສຍ ລົງໃສ່ຫ້ວຍນ້ຳ, ເຖິງວ່າໃນເວລາທີ່ **ຄ** ກຳລັງປ່ອຍ ຫຼື ຈະປ່ອຍນ້ຳເສຍນັ້ນ **ກ** ຍັງບໍ່ທັນມີຄວາມເສຍຫາຍກໍຕາມ, ແຕ່ **ກ** ເຊື່ອໝັ້ນວ່າ ນ້ຳເສຍຂອງໂຮງງານຈະຕ້ອງເຮັດໃຫ້ ປາໃນໝອງຂອງ **ກ** ເປັນພະຍາດ ຫຼື ຕາຍ ຢ່າງແນ່ນອນ, ດັ່ງນັ້ນ **ກ** ມີສິດທວງ ຫຼື ຮ້ອງຂໍໃຫ້ **ຄ** ຢຸດເຊົາການກະທຳ ຫຼື ການປ່ອຍນ້ຳເສຍລົງໃສ່ຫ້ວຍນ້ຳດັ່ງກ່າວ,ໃນກໍລະນີນີ້ **ກ** ມີສິດຮ້ອງຂໍໄປຫາອົງການທີ່ກ່ຽວຂ້ອງເພື່ອ ພິຈາລະນາ ກ່ຽວກັບການປົກປ້ອງສິດຄອບຄອງຂອງຕົນໄດ້ທຸກເວລາ, ນັບແຕ່ວັນທີ່ **ຄ** ໄດ້ມີການລະເມີດ ຫຼື ການໂຕ້ແຍ່ງ ສິດຂອງ **ກ** ເປັນຕົ້ນໄປ.

ເຫດຜົນໃນການປັບປຸງ	ມາດຕານີ້ ປັບປຸງເນື້ອໃນຂອງ ມາດຕາ 68 ຂອງກົດໝາຍວ່າດ້ວຍກຳມະສິດ ປີ 1990 ຍັງບໍ່ທັນຮັດກຸມ, ບໍ່ໄດ້ກຳນົດເວລາໃນການຮ້ອງຂໍໜຶ່ງປີ ຊຶ່ງໃນມາດຕານີ້ ພວກເຮົາຈຶ່ງໄດ້ນຳມາປັບປຸງ ແລ້ວກຳນົດເວລາໃນການຮ້ອງຂໍໃສ່ໃຫ້ມີຄວາມສະດວກໃນການປະຕິບັດຕົວຈິງ. ປະມວນກົດໝາຍແພ່ງຂອງຫວຽດນາມ ປີ 2015 ບໍ່ໄດ້ກຳນົດກ່ຽວກັບ ພາຍໃນກຳນົດເວລາໜຶ່ງປີ. ແຕ່ປະມວນກົດໝາຍແພ່ງຂອງຍີ່ປຸ່ນ ໄດ້ກຳນົດກ່ຽວກັບ ພາຍໃນກຳນົດເວລາໜຶ່ງປີ ດັ່ງນັ້ນ ການປັບປຸງເນື້ອໃນມາດນີ້ ແມ່ນມີຄວາມສຳຄັນໃນການພັດທະນາທິດສະດີກົດໝາຍແພ່ງຂອງ ສປປ ລາວ ໃຫ້ຄົບຖ້ວນ ເພື່ອເປັນບ່ອນອີງໃນການປະຕິບັດຕົວຈິງ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 185 ຂອງປະມວນກົດໝາຍແພ່ງຫວຽດນາມ.
ມາດຕາອ້າງອີງ	ມາດຕາ 333, 334, 335, 336, 337 ແລະ 338 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 247 ການສິ້ນສຸດການຄອບຄອງ

ການຄອບຄອງຊັບສິ່ງຂອງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 235 ຂອງປະມວນກົດໝາຍສະບັບນີ້ ຈະສິ້ນສຸດລົງ ໃນກໍລະນີ ດັ່ງນີ້:

1. ຜູ້ຄອບຄອງ ໄດ້ສະລະການຄອບຄອງ, ຢຸດເຊົາການຍຶດຖື ຫຼື ການຄຸ້ມຄອງຊັບສິ່ງຂອງ;

2. ຜູ້ຄອບຄອງ ບໍ່ໄດ້ທວງເອົາຊັບສິ່ງຂອງຄືນ ເມື່ອຖືກບຸກຄົນອື່ນລະເມີດ ຫຼື ໂຕ້ແຍ່ງ ຕາມກຳນົດເວລາທີ່ໄດ້ກຳນົດໄວ້ໃນມາດຕາ 246 ວັກທີສອງ, ວັກທີສາມ ຂອງປະມວນກົດໝາຍສະບັບນີ້;

3. ຜູ້ຄອບຄອງ ໄດ້ສະແດງເຈດຕະນາທີ່ຈະຄອບຄອງຊັບສິ່ງຂອງນັ້ນ ເພື່ອຕົນ ຫຼື ບຸກຄົນທີສາມ;

4. ຊັບສິ່ງຂອງທີ່ໄດ້ຄອບຄອງ ຖືກທຳລາຍ ຫຼື ສູນເສຍ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນ ເຫດການ ຫຼື ສາເຫດ ຂອງການສິ້ນສຸດການຄອບຄອງ ດ້ວຍການ ກະທຳ ຫຼື ການບໍ່ກະທຳ ຂອງຜູ້ຄອບຄອງ.
ຕົວຢ່າງ	**1. ຜູ້ຄອບຄອງ ໄດ້ສະລະການຄອບຄອງ.** **1.1 ກ** ໄດ້ຄອບຄອງທີ່ດິນໜຶ່ງຕອນ ມາເປັນເວລາ 5 ປີແລ້ວ ຕໍ່ມາ **ກ** ໄດ້ໄປຄອບຄອງທີ່ດິນຕອນໃໝ່ ແລ້ວ **ກ** ຈຶ່ງສະລະສິດຄອບຄອງທີ່ດິນຕອນເກົ່າ. **1.2 ກ** ໄດ້ເຊົ່າຫ້ອງແຖວ ຂອງ **ຂ** ກຳນົດເວລາເຊົ່າແມ່ນ 1 ປີ ໃນລາຄາເຊົ່າແມ່ນ 5.000.000 ກີບຕໍ່ປີ ແລ້ວ **ກ** ໄດ້ຈ່າຍຄ່າເຊົ່າໝົດປີ ຕາມການຕົກລົງກັນ. **ກ** ໄດ້ເຂົ້າມາຢູ່ຫ້ອງແຖວທີ່ເຊົ່ານັ້ນ ໄດ້ 6 ເດືອນຕໍ່ມາ **ກ** ໄດ້ຍ້າຍໄປຢູ່ນຳໝູ່, ຫຼັງຈາກນັ້ນ **ກ** ກໍໄດ້ມາຄອບ **ຂ** ເພື່ອສະລະສິດ ຕາມສັນຍາເຊົ່າແລ້ວມອບຫ້ອງແຖວຄືນ ໃຫ້ **ຂ** ຜູ້ໃຫ້ເຊົ່າ.

	2. ຜູ້ຄອບຄອງ ບໍ່ໄດ້ທວງເອົາຊັບສິ່ງຂອງຄືນ **ກ** ໄດ້ຄອບຄອງ ງົວໂຕໜຶ່ງ ທີ່ໄດ້ມາສ້າງຄວາມເສຍຫາຍ ຕໍ່ຜົນລະປູກ ຂອງ **ກ** ຕາມມາດຕາ 238 ແລະ ມາດຕາ 303 ວັກ 2 ຂອງປະມວນກົດໝາຍແພ່ງ. ຕໍ່ມາ **ຂ** ໄດ້ມາລັກເອົາ ງົວ ໂຕດັ່ງກ່າວ ຫຼັງຈາກນັ້ນ **ກ** ກໍຮູ້ວ່າ ງົວ ໂຕທີ່ຕົນເອງຄອບຄອງນັ້ນຢູ່ນຳ **ຂ** ແຕ່ **ກ** ກໍບໍ່ໄດ້ທວງທາວເອົາ ງົວ ໂຕ ດັ່ງກ່າວຄືນ, ເມື່ອເວລາຜ່ານໄປ ໜຶ່ງປີ ຖືວ່າ **ກ** ໄດ້ສິ້ນສຸດການຄອບຄອງ ຕາມມາດຕາ 247 ຂໍ້ 2 ຂອງປະມວນ ກົດໝາຍແພ່ງ. **3. ຜູ້ຄອບຄອງ ໄດ້ສະແດງເຈດຕະນາທີ່ຈະຄອບຄອງຊັບສິ່ງຂອງນັ້ນ ເພື່ອຕົນ ຫຼື ບຸກຄົນທີສາມ.** **ກ** ໄດ້ຄອບຄອງ ງົວໂຕໜຶ່ງ ທີ່ໄດ້ມາສ້າງຄວາມເສຍຫາຍ ຕໍ່ຜົນລະປູກຂອງ **ກ** ຕາມມາດຕາ 238 ຂໍ້ 2 ແລະ 303 ຂອງປະມວນກົດໝາຍແພ່ງ. ຫຼັກຈາກນັ້ນ **ກ** ໄດ້ຝາກ ງົວ ໂຕດັ່ງກ່າວໃຫ້ **ຂ** ຊ່ວຍຮັກສາໃຫ້ **ກ,** ຕໍ່ມາ **ຂ** ໄດ້ມາແຈ້ງໃຫ້ **ກ** ຊາບວ່າ ຈາກນີ້ໄປ **ຂ** ຈະຄອບຄອງ ງົວໂຕນັ້ນ ເພື່ອ **ຂ** ເອງ ບໍ່ແມ່ນ ເພື່ອ **ກ** ອີກຕໍ່ໄປ, ນັບຈາກນີ້ໄປຖືວ່າ **ກ** ໄດ້ສູນເສຍການຄອບຄອງ ງົວໂຕດັ່ງກ່າວ (ຕາມມາດຕາ 247 ຂໍ້ 3 ຂອງປະມວນກົດໝາຍແພ່ງ). ໃນກໍລະນີນີ້ **ກ** ສາມາດທວງໃຫ້ **ຂ** ສົ່ງ ງົວ ຄືນໂດຍເຫດຜົນທີ່ວ່າ **ຂ** ໄດ້ໂຕ້ແຍ່ງສິດຄອບຄອງຂອງ **ກ** ພາຍໃນກຳນົດເວລາໜຶ່ງປີ (ຕາມມາດຕາ 246ວັກ 1 ແລະ 2 ຂອງປະມວນກົດໝາຍແພ່ງ) **4. ຊັບສິ່ງຂອງທີ່ໄດ້ຄອບຄອງ ຖືກທຳລາຍ ຫຼື ສູນເສຍ.** **ກ** ໄດ້ຄອບຄອງ ງົວໂຕໜຶ່ງ ທີ່ໄດ້ມາສ້າງຄວາມເສຍຫາຍ ຕໍ່ຜົນລະປູກຂອງ **ກ** ຕາມມາດຕາ 238 ຂໍ້ 2 ແລະ 303 ຂອງປະມວນກົດໝາຍແພ່ງ, ຕໍ່ມາ ງົວໂຕດັ່ງກ່າວໄດ້ຕາຍ ຍ້ອນເກີດພະຍາດລະບາດ ກໍລະນີນີ້ **ກ** ກໍຈະສິ້ນສຸດການຄອບຄອງ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 63 ແລະ 68 ຂອງກົດໝາຍວ່າດ້ວຍກຳມະສິດ ປີ 1990 ເນື່ອງຈາກໄດ້ກຳນົດເປັນຫຼັກການລວມ ຊຶ່ງບໍ່ໄດ້ກຳນົດສິດໃນການສະລະ ການຄອບຄອງ ຫຼື ກຳນົດເວລາໃນການທວງ ຂອງຜູ້ຄອບຄອງຊັບສິ່ງຂອງ ໂດຍຖືກຕ້ອງ ຫຼື ບໍ່ຖືກຕ້ອງດ້ວຍຄວາມບໍລິສຸດໃຈ ຊຶ່ງການປັບປຸງເນື້ອໃນມາດຕານີ້ ແມ່ນມີຄວາມສຳຄັນຫຼາຍໃນການພັດທະນາທິດສະດີກົດໝາຍແພ່ງຂອງ ສປປ ລາວ ໃຫ້ຄົບຖ້ວນ ເພື່ອແທດເໝາະກັບສະພາບຕົວຈິງ ແລະ ກໍຈະເປັນ ບ່ອນອີງໃນການປະຕິບັດ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 235, 236 ແລະ 246 ວັກ 2, 3 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 248 ການຄອບຄອງຊັບທີ່ບໍ່ມີຕົວຕົນ

ຫຼັກການກ່ຽວກັບການຄອບຄອງຊັບສິ່ງຂອງ ສາມາດນຳໃຊ້ກັບການຄອບຄອງຊັບທີ່ບໍ່ມີຕົວຕົນ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນວ່າຈະນຳໃຊ້ຫຼັກການ ທາງກົດໝາຍຄືແນວໃດ ຕໍ່ກັບການຄອບຄອງຊັບທີ່ບໍ່ມີຕົວຕົນ. ຊຶ່ງເຫັນວ່າ ການຄອບຄອງຊັບທີ່ບໍ່ມີຕົວຕົນ ຍັງບໍ່ມີຫຼັກການສະເພາະ ຍັງນຳໃຊ້ຫຼັກການດຽວກັນ ກັບ ຫຼັກການລວມ ຂອງການຄອບຄອງຊັບທີ່ມີຕົວຕົນ.
ຕົວຢ່າງ	**1. ກ** ໄດ້ເຮັດສັນຍາເຊົ່າເຄື່ອງໝາຍການຄ້ານຳບໍລິສັດ **ຂ** ເພື່ອຈຸດປະສົງທາງດ້ານທຸລະກິດຜະລິດເຄື່ອງດື່ມນ້ຳໝາກໄມ້ ໂດຍກຳນົດເວລາໃນການເຊົ່າ 10 ປີ, ອີງຕາມສັນຍາເຊົ່າ, **ກ** ເປັນຜູ້ຄອບຄອງ ເຄື່ອງໝາຍການຄ້າ, ຜູ້ຜະລິດເຄື່ອງດື່ມນ້ຳໝາກໄມ້ ໂດຍນຳໃຊ້ເຄື່ອງໝາຍການຄ້າກາ **ຂ** ໃນກໍລະນີນີ້ ຖືວ່າ **ກ** ເປັນຜູ້ຄອບຄອງສິດ ຕໍ່ເຄື່ອງໝາຍການຄ້າ ຂອງບໍລິສັດ **ກ** ຕາມສັນຍາເຊົ່າ. **2. ກ** ແມ່ນນັກຄົ້ນຄວ້າ ເຊິ່ງໄດ້ສຳເລັດການຂຽນບົດຄົ້ນຄວ້າ ກ່ຽວກັບບັນຫາສິ່ງແວດລ້ອມ,ຖືວ່າ **ກ** ເປັນຜູ້ມີສິດຄອບຄອງຊັບທີ່ບໍ່ມີຕົວຕົນກໍຄື ລິຂະສິດ ໃນບົດຄົ້ນຄວ້າດັ່ງກ່າວ, ຖ້າວ່າ **ຂ** ຫາກນຳໃຊ້ບົດຄົ້ນຄວ້າຂອງ **ກ** ເຂົ້າໃນບົດຂຽນຂອງຕົນນັ້ນຕ້ອງ ໄດ້ຂໍອະນຸຍາດຈາກ **ກ** ຫຼື ອ້າງອີງເຖິງທີ່ມາຂອງປຶ້ມ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 42, 58, 60 ແລະ 68 ຂອງກົດໝາຍວ່າດ້ວຍກຳມະສິດ ປີ 1990 ແລະ ມາດຕາ 60 ຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ປີ 2008 ເນື່ອງຈາກບໍ່ໄດ້ກຳລະອຽດກ່ຽວກັບການຄອບຄອງຊັບສິ່ງຂອງທີ່ບໍ່ມີຕົວຕົນ. ການປັບປຸງເນື້ອໃນມາດນີ້ ແມ່ນມີຄວາມສຳຄັນໃນການປະຕິບັດ ແລະ ນຳໃຊ້ໃນກໍລະນີ ຂອງການຄອບຄອງຊັບທີ່ບໍ່ມີຕົວຕົນ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 205 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 235 - 247 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ໝວດທີ 3
ກຳມະສິດ

ມາດຕາ 249 ກຳມະສິດ

ກຳມະສິດ ແມ່ນ ສິດອັນຄົບຖ້ວນ ແລະ ເດັດຂາດຂອງເຈົ້າກຳມະສິດ ໃນການຄອບຄອງ, ນຳໃຊ້, ໄດ້ຮັບໝາກຜົນ ແລະ ຊີ້ຂາດ ກ່ຽວກັບຊັບສິ່ງຂອງໃດໜຶ່ງໃນຂອບເຂດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນນິຍາມ ແລະ ໃຫ້ຄວາມໝາຍກ່ຽວກັບກຳມະສິດ
ຕົວຢ່າງ	**ກ** ມີກຳມະສິດຕໍ່ລົດກາບະ 4 ປະຕູຄັນໜຶ່ງ ທີ່ມີໃບທະບຽນອອກຊື່ຂອງ **ກ** ຖືວ່າ **ກ** ແມ່ນເຈົ້າຂອງກຳມະສິດຕໍ່ລົດຄັນດັ່ງກ່າວ ຊຶ່ງ **ກ** ສາມາດເອົາລົດຄັນດັ່ງກ່າວໄປເຮັດສັນຍາ ເຊົ່າ, ຂາຍ, ມອບ ແລະ ຍົກຊັບໃຫ້ບຸກຄົນອື່ນໄດ້ .

ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 1 ຂອງກົດໝາຍວ່າດ້ວຍກຳມະສິດ ປີ 1990 ໄດ້ກຳນົດ ກ່ຽວກັບກຳມະສິດວ່າ ກຳມະສິດ ແມ່ນສິດອັນຄົບຖ້ວນ ແລະ ເດັດຂາດຂອງເຈົ້າກຳມະສິດ ໃນການຄອບຄອງ, ນຳໃຊ້, ໄດ້ຮັບໝາກຜົນ ແລະ ຊື້ຂາດກ່ຽວກັບຊັບອັນໃດອັນໜຶ່ງ ໃນຂອບເຂດ ຕາມທີ່ກົດໝາຍໄດ້ກຳນົດໄວ້ເຫັນວ່າ ລັດ, ລວມໝູ່, ເອກະເທດ, ເອກະຊົນ ແລະ ສ່ວນຕົວ ແມ່ນເຈົ້າກຳມະສິດ ກ່ຽວກັບຊັບໄດ້ ຈຶ່ງປ່ຽນຄຳດັ່ງກ່າວມາເປັນເຈົ້າກຳມະສິດ ແທນ ເພື່ອໃຫ້ມີຄວາມເຂົ້າໃຈງ່າຍ ແລະ ເປັນເອກພາບກັນ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 903 ຂອງປະມວນກົດໝາຍແພ່ງ ເຢຍລະມັນ; ມາດຕາ 158 ຂອງປະມວນກົດໝາຍແພ່ງ ຫວຽດນາມ; ມາດຕາ 206 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 250 - 260 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 250 ສິດໃນກຳມະສິດ

ສິດໃນກຳມະສິດ ປະກອບດ້ວຍ ສິດ ດັ່ງນີ້:

1. ສິດຄອບຄອງ;
2. ສິດນຳໃຊ້;
3. ສິດໄດ້ຮັບໝາກຜົນ;
4. ສິດຊື້ຂາດ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນ ກ່ຽວກັບບັນດາສິດຕ່າງໆ ທີ່ນອນຢູ່ໃນກຳມະສິດ.
ຕົວຢ່າງ	**ກ** ໄດ້ກຳມະສິດລົດຄັນໜຶ່ງ ດັ່ງນັ້ນ **ກ** ມີສິດໃນກຳມະສິດຕໍ່ລົດຄັນດັ່ງກ່າວຄື: ສິດຄອບຄອງ, ສິດນຳໃຊ້, ສິດໄດ້ຮັບໝາກຜົນ ແລະ ສິດຊື້ຂາດ ຕໍ່ລົດຄັນດັ່ງກ່າວ ຕາມຄວາມຕ້ອງການ ຊຶ່ງລາຍລະອຽດໃຫ້ເບິ່ງຕົວຢ່າງ ດັ່ງລຸ່ມນີ້: - ສິດຄອບຄອງ ເບິ່ງຕົວຢ່າງ ມາດຕາ 251 ຂອງບົດອະທິບາຍປະມວນກົດໝາຍແພ່ງ; - ສິດນຳໃຊ້ ເບິ່ງຕົວຢ່າງ ມາດຕາ 254 ຂອງບົດອະທິບາຍປະມວນກົດໝາຍແພ່ງ; - ສິດໄດ້ຮັບໝາກຜົນ ເບິ່ງຕົວຢ່າງ ມາດຕາ 257 ຂອງບົດອະທິບາຍປະມວນກົດໝາຍແພ່ງ; - ສິດຊື້ຂາດ ເບິ່ງຕົວຢ່າງ ມາດຕາ 258 ຂອງບົດອະທິບາຍປະມວນກົດໝາຍແພ່ງ;
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງໃໝ່ຍ້ອນວ່າ ໃນໄລຍະຜ່ານມາ ກົດໝາຍວ່າດ້ວຍກຳມະສິດ ປີ 1990 ຍັງ ບໍ່ທັນໄດ້ກຳນົດວ່າກຳມະສິດ ມີອົງປະກອບຫຍັງແດ່, ແຕ່ໄດ້ກຳນົດນິຍາມໄວ້. ສະນັ້ນ, ເພື່ອໃຫ້ສອດຄ່ອງກັບວິທີຂຽນກົດໝາຍ ສປປ ລາວ ຈຶ່ງກຳນົດອົງປະກອບ ຂອງກຳມະສິດຂຶ້ນມາໃໝ່ ແລະ ເຮັດມາດຕາອະທິບາຍ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ປະມວນກົດໝາຍແພ່ງ ເຢຍລະມັນ ໄດ້ໃຫ້ນິຍາມກ່ຽວກັບກຳມະສິດ, ແຕ່ບໍ່ໄດ້ກຳນົດກ່ຽວກັບອົງປະກອບຂອງກຳມະສິດ; ມາດຕາ 158 ຂອງປະມວນກົດໝາຍແພ່ງ ຫວຽດນາມ ປີ 2015.
ມາດຕາອ້າງອີງ	ມາດຕາ 249, 251-260 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ກ. ສິດຄອບຄອງ

ມາດຕາ 251 ສິດຄອບຄອງຂອງເຈົ້າກຳມະສິດ

ສິດຄອບຄອງ ແມ່ນ ສິດໃນການຍຶດຖື ແລະ ຄຸ້ມຄອງຊັບສິ່ງຂອງ.

ເຈົ້າກຳມະສິດ ມີສິດຄອບຄອງຊັບສິ່ງຂອງທີ່ເປັນຂອງຕົນຢ່າງອິດສະລະ ແຕ່ບໍ່ໃຫ້ສ້າງຄວາມເສຍຫາຍ ຫຼື ຜົນກະທົບຕໍ່ຜົນປະ�โຫຍດຂອງ ລັດ, ລວມໝູ່ ຫຼື ສິດຜົນປະ�โຫຍດອັນຊອບທຳຂອງບຸກຄົນອື່ນ, ເວັ້ນເສຍແຕ່ກົດໝາຍຫາກໄດ້ກຳນົດໄວ້ເປັນຢ່າງອື່ນ.

ຈຸດປະສົງ	ເພື່ອກຳນົດ ແລະ ສະແດງໃຫ້ເຫັນເນື້ອໃນກ່ຽວກັບ ນິຍາມ ຫຼື ເນື້ອໃນ ຂອງສິດຄອບຄອງ ທີ່ເປັນໜຶ່ງໃນສິດທີ່ນອນຢູ່ໃນກຳມະສິດ.
ຕົວຢ່າງ	**ກ** ເປັນເຈົ້າຂອງລົດກະບະ 4 ປະຕູໜຶ່ງຄັນ **ກ** ສາມາດຄອບຄອງລົດຄັນດັ່ງກ່າວຢ່າງເປັນອິດສະລະ ຊຶ່ງຄວາມເປັນອິດສະລະໃນການຄອບຄອງແມ່ນໝາຍເຖິງສິດໃນການຄອບຄອງ ແລະ ສິດໃນການຕັດສິນໃຈ. ແຕ່ສິດໃນການຄອບຄອງນັ້ນ **ກ** ບໍມີສິດທີ່ຈະເອົາລົດຂອງຕົນໄປຈອດໄວ້ຢູ່ແຄມທາງເປັນປະຈຳ ຊຶ່ງຈະເປັນການສ້າງຄວາມຫຍຸ້ງຍາກຕໍ່ຜູ້ຂັບຂີ່ຄົນອື່ນໆ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງໃໝ່ຍ້ອນວ່າກົດໝາຍວ່າດ້ວຍກຳມະສິດ ປີ 1990 ຍັງບໍ່ທັນໄດ້ກຳນົດກ່ຽວ ກັບນິຍາມກ່ຽວກັບສິດຄອບຄອງ, ແຕ່ສິດດັ່ງກ່າວ ແມ່ນອົງປະກອບສຳຄັນຂອງ ກຳມະສິດ. ສະນັ້ນ, ເພື່ອໃຫ້ຫຼັກການດັ່ງກ່າວ ມີຄວາມຊັດເຈນ ຈຶ່ງຕ້ອງໄດ້ກຳນົດເຂົ້າຕື້ມ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 179 ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2015.
ມາດຕາອ້າງອີງ	ມາດຕາ 235, 247, 249 ແລະ 250 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 252 ການໄດ້ສິດຄອບຄອງ

ບຸກຄົນທີ່ຍຶດຖື ຫຼື ຄຸ້ມຄອງຊັບສິ່ງຂອງໂດຍຖືກຕ້ອງ ເພື່ອຜົນປະ�โຫຍດຂອງຕົນ ຫຼື ເພື່ອຜົນປະ�โຫຍດຂອງຜູ້ອື່ນ ຖືວ່າບຸກຄົນນັ້ນໄດ້ສິດຄອບຄອງ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນວິທີ ການໄດ້ສິດຄອບຄອງ ຊຶ່ງເປັນໜຶ່ງໃນສິດຢູ່ໃນກຳມະສິດ.
ຕົວຢ່າງ	**1. ກ** ຈັບໄດ້ ງົວໂຕໜຶ່ງທີ່ໄດ້ມາເຂົ້າສວນ ແລະ ໄດ້ສ້າງຄວາມເສຍຫາຍໃຫ້ **ກ** ຫຼັງຈາກນັ້ນ**ກ** ໄດ້ນຳເອົາງົວ ໂຕດັ່ງກ່າວ ໄປແຈ້ງຕໍ່ອົງການຈັດຕັ້ງບ້ານແລ້ວທາງອົງການຈັດຕັ້ງບ້ານກໍ່ໄດ້ມອບ ງົວ ໂຕດັ່ງກ່າວຄືນໃຫ້ **ກ** ເປັນຜູ້ຮັກສາເພື່ອລໍຖ້າເຈົ້າຂອງ ງົວ ມາທວງເອົາຄືນ ໃນກໍລະນີນີ້ **ກ** ໄດ້ສິດຄອບຄອງຕໍ່ ງົວໂຕນັ້ນ ຕາມມາດຕາ 238 ຂໍ້ 2 ແລະ ມາດຕາ 303 ວັກ 2 ຂອງປະມວນກົດໝາຍແພ่ง. **2. ກ** ໄດ້ຄອບຄອງທີ່ດິນໜຶ່ງຕອນ ດ້ວຍຄວາມບໍລິສຸດໃຈ ເພື່ອຈຸດປະສົງທຳການກະເສດ ໃນກໍລະນີນີ້ **ກ** ໄດ້ສິດຄອບຄອງຕໍ່ທີ່ດິນຕອນນັ້ນ.

ເຫດຜົນໃນການສ້າງໃໝ່	ມາດຕານີ້ ສ້າງໃໝ່ຍ້ອນວ່າກົດໝາຍວ່າດ້ວຍ ກຳມະສິດ ປີ 1990 ໄດ້ກຳນົດກ່ຽວກັບການຄອບຄອງໄວ້ ໃນມາດຕາ 30 ການຄອບຄອງທີ່ ຖືກກົດໝາຍ, ມາດຕາ 31 ການຄອບຄອງວັດຖຸສິ່ງຂອງ ຕາມການອະນຸຍາດພິເສດ, ມາດຕາ 58 ຜູ້ຄອບຄອງຊັບສິ່ງຂອງຢ່າງຜິດກົດໝາຍ ໂດຍຄວາມບໍລິສຸດໃຈ, ມາດຕາ 59 ຜູ້ຄອບຄອງຊັບສິ່ງຂອງຢ່າງຜິດກົດໝາຍ ໂດຍບໍ່ມີຄວາມບໍລິສຸດໃຈ, ມາດຕາ 60 ໝາກຜົນ ແລະ ລາຍໄດ້ຈາກ ຊັບສິ່ງຂອງທີ່ຄອບຄອງຢ່າງຜິດກົດໝາຍ, ມາດຕາ 61 ການທີ່ເຮັດໃຫ້ສະພາບຂອງຊັບສິ່ງຂອງ ທີ່ຄອບຄອງຢ່າງຜິດກົດໝາຍດີຂຶ້ນ, ມາດຕາ 66 ການຮ້ອງຟ້ອງເອົາຊັບສິ່ງຂອງ ທີ່ໄດ້ມອບໃຫ້ບຸກຄົນອື່ນຄອບຄອງ, ມາດຕາ 68 ການປົກປ້ອງສິດຂອງຜູ້ຄອບຄອງຊັບສິ່ງຂອງ ຊຶ່ງຕົນບໍ່ແມ່ນເຈົ້າກຳມະສິດ ແຕ່ຍັງບໍ່ທັນມີມາດຕາໃດ ກຳນົດກ່ຽວກັບການໄດ້ສິດຄອບຄອງ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 180 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ; ມາດຕາ 1367 ຂອງປະມວນກົດໝາຍແພ່ງ ແລະ ພານິດ ໄທ; ມາດຕາ 186 ຂອງປະມວນກົດໝາຍແພ່ງ ຫວຽດນາມ.
ມາດຕາອ້າງອີງ	ມາດຕາ 245, 249, 250 ແລະ 251 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 253 ສິດຄອບຄອງຂອງຜູ້ບໍ່ແມ່ນເຈົ້າກຳມະສິດ

ຜູ້ບໍ່ແມ່ນເຈົ້າກຳມະສິດ ມີສິດຄອບຄອງຊັບສິ່ງຂອງ ທີ່ບໍ່ແມ່ນກຳມະສິດຂອງຕົນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ຫຼື ສັນຍາ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນ ກ່ຽວກັບສິດຄອບຄອງ ຂອງບຸກຄົນບໍ່ແມ່ນເຈົ້າກຳມະສິດ.
ຕົວຢ່າງ	**1. ກ** ໄດ້ເຊົ່າລົດກະບະຄັນໜຶ່ງ ຈາກ **ຂ** ພາຍຫຼັງທີ່ **ຂ** ໄດ້ມອບລົດຄັນທີ່ເຊົ່ານັ້ນໃຫ້ **ກ** ໄປແລ້ວນັ້ນ **ກ** ຈະໄດ້ສິດຄອບຄອງ ລົດຄັນດັ່ງກ່າວຕາມສັນຍາເຊົ່າ (ຕາມມາດຕາ 434 ຂອງປະມວນກົດໝາຍແພ່ງ). **2. ກ** ເຈົ້າຂອງສວນ ຈັບໄດ້ ງົວ ໂຕໜຶ່ງທີ່ໄດ້ເຂົ້າມາທຳລາຍເຄື່ອງປູກຂອງ **ກ** ພາຍຫຼັງທີ່ **ກ** ຈັບໄດ້ແລ້ວ **ກ** ກໍໄດ້ໄປແຈ້ງໃຫ້ ເຈົ້າພະນັກງານ ຢູ່ຫ້ອງການບ້ານ ເພື່ອແຈ້ງຫາເຈົ້າຂອງ ງົວ ໂຕດັ່ງກ່າວ, ເມື່ອແຈ້ງແລ້ວທາງຫ້ອງການບ້ານກໍມອບ ງົວ ໂຕທີ່ຈັບໄດ້ນັ້ນໃຫ້ **ກ** ຮັກສາ ກໍລະນີນີ້ **ກ** ໄດ້ສິດຄອບຄອງຕາມກົດໝາຍ (ຕາມມາດຕາ 303 ວັກ 1 ແລະ 2 ຂອງປະມວນກົດໝາຍແພ່ງ).
ເຫດຜົນໃນການສ້າງໃໝ່	ມາດຕານີ້ ສ້າງໃໝ່ຍ້ອນວ່າ ມາດຕາ 68 ຂອງກົດໝາຍວ່າດ້ວຍກຳມະສິດ ປີ 1990 ໄດ້ກຳນົດ ກ່ຽວກັບການຄອບຄອງຊັບສິ່ງຂອງ ຊຶ່ງຕົນບໍ່ແມ່ນເຈົ້າກຳມະສິດ ເຊັ່ນ ຜູ້ເຊົ່າ, ຜູ້ຮັກສາ, ຜູ້ຢືມ ໂດຍກຳນົດສິດຮ້ອງຟ້ອງເຊັ່ນດຽວກັນກັບ ເຈົ້າກຳມະສິດ ເພື່ອທວງເອົາຊັບສິ່ງຂອງຄືນ ແລະ ເພື່ອທວງໃຫ້ຢຸດເຊົາການກີດຂວາງ ຫຼື ລົບລ້າງອຸປະສັກຕາມທີ່ໄດ້ບົ່ງໄວ້ໃນມາດຕາ 57 ຂອງກົດໝາຍວ່າດ້ວຍກຳມະສິດ ປີ 1990, ແຕ່ບໍ່ໄດ້ກຳນົດແຈ້ງ ກ່ຽວກັບສິດອື່ນ ຕາມສັນຍາ ແລະ ກົດໝາຍ .
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 187 ຂອງປະມວນກົດໝາຍແພ່ງ ຫວຽດນາມ.
ມາດຕາອ້າງອີງ	ມາດຕາ 245 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼືປະເພນີສານ	ສືບຕໍ່ຄົ້ນຄວ້າ.

ຂ. ສິດນຳໃຊ້

ມາດຕາ 254 ສິດນຳໃຊ້

ສິດນຳໃຊ້ ແມ່ນສິດຂອງເຈົ້າກຳມະສິດ ຫຼື ບຸກຄົນອື່ນທີ່ບໍ່ແມ່ນເຈົ້າກຳມະສິດ ໃນການຊົມໃຊ້ຊັບສິ່ງຂອງທີ່ຢູ່ໃນການຄອບຄອງຂອງຕົນ ຕາມກົດໝາຍ ຫຼື ສັນຍາ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນ ເນື້ອໃນກ່ຽວກັບ ສິດນຳໃຊ້ ທີ່ເປັນສິດຂອງເຈົ້າກຳມະສິດ ແລະ ສິດນຳໃຊ້ ທີ່ເປັນສິດຂອງບຸກຄົນອື່ນ ຕາມກົດໝາຍ ແລະ ສັນຍາ.
ຕົວຢ່າງ	**ກ** ມີລົດຄັນໜຶ່ງ ທີ່ເປັນກຳມະສິດຂອງຕົນເອງ ດັ່ງນັ້ນ **ກ** ມີສິດນຳໃຊ້ລົດຄັນດັ່ງກ່າວ ເພື່ອຕອບສະໜອງຕາມຄວາມຕ້ອງການຂອງ **ກ** ເອງ. ນອກຈາກນັ້ນ **ກ** ກໍຍັງມີສິດເອົາລົດຂອງຕົນໄປໃຫ້ **ຂ** ເຊົ່າ ຫຼື ໃຫ້ຢືມເພື່ອນຳໃຊ້.
ເຫດຜົນໃນການສ້າງໃໝ່	ມາດຕານີ້ ສ້າງໃໝ່ຍ້ອນວ່າ ຜ່ານມາ ຍັງບໍ່ທັນມີກົດໝາຍໃດ ກຳນົດກ່ຽວກັບນິຍາມຂອງສິດນຳໃຊ້.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 189 ຂອງປະມວນກົດໝາຍແພ່ງຫວຽດນາມ.
ມາດຕາອ້າງອີງ	ມາດຕາ 249 ແລະ 250 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 255 ສິດນຳໃຊ້ຂອງເຈົ້າກຳມະສິດ

ເຈົ້າກຳມະສິດ ມີສິດນຳໃຊ້ຊັບສິ່ງຂອງທີ່ເປັນຂອງຕົນ ແຕ່ບໍ່ໃຫ້ສ້າງຄວາມເສຍຫາຍ ຫຼື ຜົນກະທົບຕໍ່ຜົນປະ�โยດຂອງລັດ, ລວມໝູ່ ຫຼື ສິດຜົນປະโยດອັນຊອບທຳຂອງບຸກຄົນອື່ນ, ເວັ້ນເສຍແຕ່ກົດໝາຍຫາກໄດ້ກຳນົດໄວ້ເປັນຢ່າງອື່ນ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນຂອບເຂດສິດ ຂອງເຈົ້າກຳມະສິດໃນການນຳໃຊ້ຊັບສິ່ງຂອງ.
ຕົວຢ່າງ	**ກ** ມີທີ່ດິນຕອນໜຶ່ງມີເນື້ອທີ 1ເຮັດຕ່າຢູ່ຕິດກັບບ້ານ ຫຼື ມີເຮືອນຢູ່ອ້ອມຂ້າງທີ່ດິນຂອງ **ກ, ກ** ມີສິດນຳໃຊ້ທີ່ດິນຂອງຕົນຢ່າງເປັນອິດສະລະເພື່ອຕອບສະໜອງຕາມຄວາມຕ້ອງການຂອງຕົນແຕ່ **ກ** ບໍ່ມີສິດນຳໃຊ້ທີ່ດິນຕອນດັ່ງກ່າວມາສ້າງໃຫ້ເກີດປະโยດແກ່ຕົນເອງ ແຕ່ຂັດຕໍ່ຜົນປະโยດອັນລວມ ເຊັ່ນ: ເຮັດເປັນຟາມລ້ຽງໝູ, ຟາມລ້ຽງໄກ່ ຢ່າງນີ້ເປັນຕົ້ນ ເພາະວ່າມັນຈະສົ່ງກິ່ນເໝັນຕໍ່ຜູ້ຄົນທີ່ຢູ່ອ້ອມຂ້າງ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ ສ້າງໃໝ່ຍ້ອນວ່າຜ່ານມາ ຍັງບໍ່ທັນມີກົດໝາຍໃດ ກຳນົດກ່ຽວກັບສິດນຳໃຊ້ຂອງເຈົ້າກຳມະສິດ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 190 ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2015.
ມາດຕາອ້າງອີງ	ມາດຕາ 249, 250 ແລະ 254 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 256 ສິດນຳໃຊ້ຂອງຜູ້ບໍ່ແມ່ນເຈົ້າກຳມະສິດ

ຜູ້ບໍ່ແມ່ນເຈົ້າກຳມະສິດ ມີສິດນຳໃຊ້ຊັບສິ່ງຂອງທີ່ບໍ່ແມ່ນກຳມະສິດຂອງຕົນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ຫຼື ສັນຍາ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນກ່ຽວກັບ ສິດນຳໃຊ້ຂອງບຸກຄົນ ທີ່ບໍ່ແມ່ນເຈົ້າກຳມະສິດ.
ຕົວຢ່າງ	**ກ** ໄດ້ເຮັດສັນຍາເຊົ່າລົດ ນຳ **ຂ** ເປັນເວລາ 1 ເດືອນ ດັ່ງນັ້ນ **ກ** ມີສິດນຳໃຊ້ລົດຄັນດັ່ງກ່າວຕາມສັນຍາເຊົ່າ. (ຕາມມາດຕາ 434 ຂອງປະມວນກົດໝາຍແພ່ງ)
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງໃໝ່ຍ້ອນວ່າ ການນຳໃຊ້ຊັບສິ່ງຂອງໆບຸກຄົນອື່ນ ແມ່ນມີທົ່ວໄປໃນສັງຄົມ, ແຕ່ຍັງບໍ່ທັນມີ ມາດຕາກົດໝາຍໃດ ກຳນົດກ່ຽວກັບບັນຫານີ້. ສະນັ້ນ, ເພື່ອຮັບປະກັນໃຫ້ສິດ ແລະ ຜົນປະ�โຫຍດຂອງບຸກຄົນ ທີ່ບໍ່ເປັນເຈົ້າກຳມະສິດໄດ້ຮັບການປົກປ້ອງນັ້ນ, ເຫັນວ່າ ມີຄວາມຈຳເປັນ ຕ້ອງໄດ້ກຳນົດເຂົ້າຕື່ມ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 191 ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2015.
ມາດຕາອ້າງອີງ	ມາດຕາ 249, 250, 254 ແລະ 255 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ຄ. ສິດໄດ້ຮັບໝາກຜົນ

ມາດຕາ 257 ສິດໄດ້ຮັບໝາກຜົນ

ສິດໄດ້ຮັບໝາກຜົນ ແມ່ນ ສິດຂອງເຈົ້າກຳມະສິດ ຫຼື ບຸກຄົນອື່ນທີ່ບໍ່ແມ່ນເຈົ້າກຳມະສິດ ໃນການໄດ້ຮັບໝາກຜົນ ທີ່ເກີດຈາກຊັບສິ່ງຂອງ ຫຼື ການນຳໃຊ້ຊັບສິ່ງຂອງ ຂອງຕົນ ຫຼື ທີ່ຕົນຄອບຄອງຢ່າງຖືກຕ້ອງຕາມກົດໝາຍ ຫຼື ສັນຍາ.

ຈຸດປະສົງ	ເພື່ອເຮັດໃຫ້ເຫັນ ກ່ຽວກັບເນື້ອໃນຂອງສິດໄດ້ຮັບໝາກຜົນ ຊຶ່ງເປັນໜຶ່ງໃນສິດທີ່ນອນຢູ່ໃນກຳມະສິດ.
ຕົວຢ່າງ	**1. ກ** ມີສ່ວນໝາກລິ້ນຈີ່ 2 ເຮັດຕ່າ ຊຶ່ງໃນແຕ່ລະປີ **ກ** ມີລາຍໄດ້ຈາກການເກັບໝາກ ລິ້ນຈີ່ ໄປຂາຍ ຊຶ່ງເປັນໝາກຜົນຂອງ **ກ** ທີ່ເກີດຈາກການນຳໃຊ້ຊັບ. **2. ກ** ໄດ້ເຊົ່າທີ່ດິນນາຂອງ **ຂ** ເພື່ອປູກເຂົ້າ ຊຶ່ງເຂົ້າທີ່ **ກ** ໄດ້ມາຈາກການເຮັດນານັ້ນ ຄືໝາກຜົນ ທີ່ເກີດຈາກການຄອບຄອງທີ່ດິນຂອງ **ຂ** ຕາມສັນຍາເຊົ່າ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ ສ້າງໃໝ່ຍ້ອນວ່າ ມາດຕາ 34 ຂອງກົດໝາຍວ່າດ້ວຍກຳມະສິດ ປີ 1990 ໄດ້ກຳນົດກ່ຽວກັບກຳມະສິດກ່ຽວກັບໝາກຜົນ ແລະ ລາຍໄດ້ວ່າໝາກຜົນ, ລາຍໄດ້ທີ່ໄດ້ມາຈາກຊັບສິ່ງຂອງໃດໜຶ່ງ ກໍຈະເປັນຂອງເຈົ້າກຳມະສິດ ກ່ຽວກັບຊັບສິ່ງຂອງເຫຼົ່ານັ້ນ ຖ້າວ່າກົດໝາຍ ຫຼື ສັນຍາຫາກບໍ່ໄດ້ບົ່ງໄວ້ຢ່າງອື່ນ, ເຫັນວ່າມີຄວາມຄົບຖ້ວນ ແຕ່ຍັງບໍ່ໄດ້ລະບຸກ່ຽວກັບສິດໃນການໄດ້ຮັບໝາກຜົນ ຂອງບຸກຄົນອື່ນເທື່ອ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 189 ຂອງປະມວນກົດໝາຍແພ່ງຫວຽດນາມ.
ມາດຕາອ້າງອີງ	ມາດຕາ 230, 249 ແລະ 250 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ງ. ສິດຊື້ຂາດ

ມາດຕາ 258 ສິດຊື້ຂາດ

ສິດຊື້ຂາດ ແມ່ນ ສິດຂອງເຈົ້າກຳມະສິດໃນການ ຂາຍ, ແລກປ່ຽນ, ມອບ, ຍົກ, ໂອນ, ສະລະ ຫຼື ທຳລາຍຊັບສິ່ງຂອງໃດໜຶ່ງຂອງຕົນ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນ ກ່ຽວກັບເນື້ອໃນ ຂອງສິດຊື້ຂາດ ຊຶ່ງເປັນໜຶ່ງໃນສິດທີ່ນອນຢູ່ໃນກຳມະສິດ.
ຕົວຢ່າງ	**ກ** ມີລົດຄັນໜຶ່ງ ທີ່ເປັນກຳມະສິດຂອງຕົນ ດັ່ງນັ້ນ **ກ** ມີສິດ ຕໍ່ລົດຄັນດັ່ງກ່າວຄື: **ກ** ສາມາດ ເອົາລົດຄັນດັ່ງກ່າວໄປຂາຍ, ມອບ, ແລກປ່ຽນ ກັບ ບຸກຄົນອື່ນ ຕາມຄວາມຕ້ອງການຂອງ **ກ**.
ເຫດຜົນໃນການສ້າງໃໝ່	ມາດຕານີ້ ສ້າງໃໝ່ຍ້ອນວ່າຜ່ານມາ ຍັງບໍ່ທັນມີກົດໝາຍໃດ ກຳນົດນິຍາມກ່ຽວກັບສິດຊື້ຂາດຂອງເຈົ້າກຳມະສິດ. ສະນັ້ນ, ເພື່ອໃຫ້ຈະແຈ້ງຂຶ້ນຕື່ມ, ຈຶ່ງເຫັນວ່າມີຄວາມຈຳເປັນຕ້ອງໄດ້ກຳນົດ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 192 ແລະ 194 ຂອງ ປະມວນກົດໝາຍແພ່ງ ຫວຽດນາມ ປີ 2015
ມາດຕາອ້າງອີງ	ມາດຕາ 249, 250, 259 ແລະ 260 ຂອງປະມວນກົດໝາຍແພ່ງ .
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 259 ການຈຳກັດສິດໃນການຊື້ຂາດ

ສິດໃນການຊື້ຂາດ ກ່ຽວກັບຊັບສິ່ງຂອງຈະຖືກຈຳກັດ ກໍຕໍ່ເມື່ອກົດໝາຍຫາກໄດ້ກຳນົດໄວ້ເທົ່ານັ້ນ.

ໃນກໍລະນີ ເຈົ້າກຳມະສິດ ມີຈຸດປະສົງຊື້ຂາດຕໍ່ຊັບທີ່ມີຄຸນຄ່າທາງດ້ານປະຫວັດສາດ ແລະ ວັດທະ ນະທຳ ໂດຍຜ່ານການຊື້-ຂາຍນັ້ນ ລັດມີບຸລິມະສິດຊື້ເອົາຊັບນັ້ນກ່ອນ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນ ກ່ຽວກັບຂໍ້ຈຳກັດສິດຊື້ຂາດ ຂອງເຈົ້າກຳມະສິດ.
ຕົວຢ່າງ	**ກ** ມີຮູບປັ້ນ ຫຼື ພະພຸດທະຮູບອົງໜຶ່ງ ທີ່ມີຄຸນຄ່າທາງດ້ານວັດທະນະທຳ ຊຶ່ງ **ກ** ບໍ່ສາມາດຈະຂາຍພະພຸດທະຮູບອົງນັ້ນໂດຍລຳພັງໃຈ. ເມື່ອ **ກ** ມີຈຸດປະສົງຈະຂາຍ ຮູບປັ້ນ ຫຼື ພະພຸດທະຮູບອົງນັ້ນໃຫ້ **ຂ** ຫຼື ໃຫ້ບຸກຄົນອື່ນ **ກ** ຕ້ອງໄດ້ແຈ້ງເຈດຈຳນົງຂອງຕົນ ໃຫ້ພະນັກງານຫ້ອງການປົກຄອງບ້ານ ບ່ອນທີ່ **ກ** ຢູ່ສາກ່ອນ, ຖ້າວ່າລັດບໍ່ຊື້ ຫຼື ໄດ້ຮັບອະນຸຍາດ ຈາກພາກສ່ວນທີ່ກ່ຽວຂ້ອງສາກ່ອນ, **ກ** ຈຶ່ງສາມາດ ຂາຍໃຫ້ **ຂ** ຫຼື ບຸກຄົນອື່ນໄດ້.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງໃໝ່ຍ້ອນວ່າ ຜ່ານມາຍັງບໍ່ທັນມີກົດໝາຍໃດ ກຳນົດຂໍ້ຈຳກັດສິດຊື້ຂາດຂອງເຈົ້າກຳມະສິດ. ສະນັ້ນ, ເພື່ອໃຫ້ມີຈະແຈ້ງຂຶ້ນຕື່ມ, ຈຶ່ງເຫັນວ່າມີຄວາມຈຳເປັນຕ້ອງໄດ້ກຳນົດ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 193 ຂອງປະມວນກົດໝາຍແພ່ງຫວຽດນາມ 2015.
ມາດຕາອ້າງອີງ	ມາດຕາ 249, 250 ແລະ 260 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 260 ສິດຊື້ຂາດຂອງຜູ້ບໍ່ແມ່ນເຈົ້າກຳມະສິດ

ຜູ້ບໍ່ແມ່ນເຈົ້າກຳມະສິດ ມີສິດຊື້ຂາດກ່ຽວກັບຊັບສິ່ງຂອງທີ່ບໍ່ແມ່ນກຳມະສິດຂອງຕົນ ຕາມການອະນຸຍາດຂອງເຈົ້າກຳມະສິດ ຫຼື ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນ ກ່ຽວກັບສິດຊື້ຂາດ ຂອງບຸກຄົນ ທີ່ບໍ່ແມ່ນເຈົ້າກຳມະສິດ.
ຕົວຢ່າງ	**ກ** ມີທຸລະກິດ ຂາຍລົດມືສອງ ແລ້ວ **ຂ** ໄດ້ນຳເອົາລົດ ຂອງ **ຂ** ເອງມາຝາກ ຫຼື ເຮັດໃບມອບສິດໃຫ້ **ກ** ຂາຍ ກໍລະນີນີ້ **ກ** ມີສິດຂາຍລົດຂອງ **ຂ** ຕາມການອະນຸຍາດຂອງ **ຂ** ຜູ້ເປັນເຈົ້າກຳມະສິດ ຫຼື ກໍລະນີທີ່ **ກ** ປະກອບກິດຈະການແຍກຊິ້ນສ່ວນ ແລະ ທຳລາຍລົດທີ່ບໍ່ໄດ້ໃຊ້ແລ້ວ. **ຂ** ໄດ້ນຳເອົາລົດຂອງຕົນ ມາໃຫ້ **ກ** ເພື່ອແຍກຊິ້ນສ່ວນຂາຍ ຫຼື ແຍກຊິ້ນສ່ວນ ເພື່ອນຳໄປເຂົ້າໂຮງງານ. ກໍລະນີນີ້, **ກ** ມີສິດແຍກຊິ້ນສ່ວນ ແລະ ທຳລາຍລົດຂອງ **ຂ.**
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງໃໝ່ຍ້ອນວ່າ ຜ່ານມາຍັງບໍ່ທັນມີກົດໝາຍໃດ ກຳນົດກ່ຽວກັບການຊື້ຂາດຂອງບຸກຄົນ ທີ່ບໍ່ແມ່ນເຈົ້າກຳມະສິດຕໍ່ຊັບສິ່ງຂອງ. ສະນັ້ນ, ເພື່ອໃຫ້ຈະແຈ້ງຂຶ້ນຕື່ມ, ຈຶ່ງເຫັນວ່າ ມີຄວາມຈຳເປັນຕ້ອງໄດ້ກຳນົດ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 195 ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2015.
ມາດຕາອ້າງອີງ	ມາດຕາ 249, 250, 258 ແລະ 259 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ໝວດທີ 4
ຮູບກຳມະສິດ

ມາດຕາ 261 ຮູບກຳມະສິດ

ກຳມະສິດມີ ສີ່ ຮູບການ ດັ່ງນີ້:

1. ກຳມະສິດຂອງລັດ;
2. ກຳມະສິດລວມໝູ່;
3. ກຳມະສິດເອກະເທດ;
4. ກຳມະສິດເອກະຊົນ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນ ແບບກະທັດຮັດ ກ່ຽວກັບ 4 ຮູບການ ຂອງກຳມະສິດຂອງລັດ.
ຕົວຢ່າງ	**1. ກຳມະສິດຂອງລັດ.** ທີ່ດິນ, ອາຄານ ຫຼື ລົດຮັບໃຊ້ລວມທີ່ໃສ່ປ້າຍທະບຽນສີຟ້າ ທີ່ມີຖະບຽນອອກຊື່ກະຊວງ ຫຼື ອອກຊື່ອົງການຈັດຕັ້ງຂອງລັດ ແມ່ນເປັນລັດຖະສົມບັດ ຫຼື ເອີ້ນວ່າກຳມະມະສິດຂອງລັດ. **2. ກຳມະສິດລວມໝູ່:** ບ້ານ **ກ** ໄດ້ມີການຈັດຕັ້ງເປັນກຸ່ມ ໃນຮູບແບບສະຫະກອນ ເພື່ອຜະລິດພັກປອດສັນຜົດ ທີ່ເປັນການລວມຕົວຂອງກຸ່ມແມ່ບ້ານ, ໃນນັ້ນຊັບສິນຂອງອົງການຈັດຕັ້ງ ຫຼື ສະຫະກອນດັ່ງກ່າວລວມມີທີ່ດິນ ມີເນື້ອທີ່ 20 ເຮັກຕ່າ, ລົດໄຖນາ 1 ຄັນ, ລົດຂົນສົ່ງ 2 ຄັນ, ເງິນທີ່ເປັນທຶນຄົງທີ່ 200,000,000 ກີບ, ທຶນໝຸນວຽນ ຈຳນວນ 300,000,000 ກີບ ແລະ ອຸປະກອນຮັບໃຊ້ຕ່າງໆຈຳນວນໜຶ່ງ ຊຶ່ງຊັບສິນທັງໝົດນັ້ນ ຖືວ່າແມ່ນກຳມະສິດລວມໝູ່.

	3. ກຳມະສິດເອກະເທດ. ຄອບຄົວ **ກ** ມີອາຊີບເປັນຊ່າງຕີເຫຼັກຄື: ຕີຟ້າ, ສຽມ ແລະ ຈົກ ເພື່ອເປັນສິນຄ້າຂາຍຕາມທ້ອງຕະຫຼາດ ໃນການດຳເນີນທຸລະກິດຂອງຄອບຄົວ **ກ** ມີຊັບສິນລວມມີ ລົດຂົນສົ່ງ 1 ຄັນ, ມີໂຮງຕີເຫຼັກ ໜຶ່ງເຄື່ອງ ແລະ ເຄື່ອງອຸປະກອນຮັບໃຊ້ຈຳນວນໜຶ່ງ ຊຶ່ງທັງໝົດນັ້ນ ຖືໄດ້ວ່າແມ່ນກຳມະສິດເອກະເທດ ຂອງຄອບຄົວ **ກ**. **4. ກຳມະສິດເອກະຊົນ.** **ກ** ເຮັດບໍລິສັດຜະລິດກາເຟເພື່ອສົ່ງອອກ ໂດຍໄດ້ມີການຈົດທະບຽນວິສາຫະກິດ ແລະ ດຳເນີນທຸລະກິດຖືກຕ້ອງຕາມກົດໝາຍ. ໃນການດຳເນີນທຸລະກິດຂອງ **ກ** ມີຊັບສິນລວມມີ ລົດຂົນສົ່ງ 1 ຄັນ,ມີທີ່ດິນ ແລະ ອາຄານທີ່ເປັນໂຮງງານ ແລະ ເຄື່ອງອຸປະກອນຮັບໃຊ້ຂອງບໍລິສັດ ຈຳນວນໜຶ່ງ ຊຶ່ງທັງໝົດນັ້ນ ຖືໄດ້ວ່າແມ່ນກຳມະສິດເອກະຊົນ.
ເຫດຜົນໃນການຮັກສາເດີມ	ມາດຕານີ້ຮັກສາເດີມ ເນື້ອໃນມາດຕາ 2 ຂອງກົດໝາຍວ່າດ້ວຍກຳມະສິດປີ 1990 ເພື່ອໃຫ້ສອດຄ່ອງກັບ ມາດຕາ 16 ຂອງລັດຖະທຳມະນູນຊຶ່ງປັບປຸງ ຈາກ ຫ້າຮູບກຳມະສິດ ມາເປັນສີ່ຮູບກຳມະສິດ ຕາມລັດຖະທຳມະນູນ, ໂດຍນຳເອົາ ກຳມະສິດສ່ວນຕົວ ມາຮ່ວມເຂົ້າຢູ່ໃນ ກຳມະສິດເອກະຊົນ. ສ່ວນປະເພດຂອງ ກຳມະສິດລວມໝູ່ແມ່ນນຳໄປໄວ້ໃນ ມາດຕາ 268 ວັກ 2 ຂອງປະມວນ ກົດໝາຍແພ່ງ. **ຄຳວ່າ:** ກຳມະສິດຂອງລັດ ຕາມກົດໝາຍວ່າດ້ວຍຊັບສິນຂອງລັດ ລວມມີສອງ ລັກສະ ນະຄື: 1). ສາທາລະນະສົມບັດ (ມາດຕາ 12) ແລະ 2). ລັດຖະສົມບັດ (ມາດຕາ 13).
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງ ຂອງປະເທດອື່ນ	ມາດຕາ 197 ແລະ 205 ຂອງປະມວນກົດໝາຍແພ່ງ ຫວຽດນາມ .
ມາດຕາອ້າງອີງ	ມາດຕາ 262, 268, 272 ແລະ 274 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ກ. ກຳມະສິດຂອງລັດ

ມາດຕາ 262 ເຈົ້າກຳມະສິດຂອງຊັບສົ່ງຂອງຂອງລັດ

ລັດ ເປັນເຈົ້າກຳມະສິດແຕ່ຜູ້ດຽວ ກ່ຽວກັບຊັບສົ່ງຂອງທັງໝົດຂອງລັດ ແຕ່ຊັບສົ່ງຂອງດັ່ງກ່າວ ແມ່ນ ຢູ່ໃນການຄຸ້ມຄອງຂອງອົງການຈັດຕັ້ງຂອງລັດ.

ອົງການຈັດຕັ້ງຂອງລັດ ເປັນຜູ້ປະຕິບັດສິດຄອບຄອງ, ນຳໃຊ້, ໄດ້ຮັບໝາກຜົນ ແລະ ຊື້ຂາດ, ອາດ ມອບໃຫ້ອົງການຈັດຕັ້ງລວມໝູ່ ຫຼື ບຸກຄົນເຊົ່າຊັບສົ່ງຂອງນັ້ນ ຕາມຂອບເຂດທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ສອດຄ່ອງກັບວຽກງານ ແລະ ແຜນການຂອງລັດກຳໄດ້.

ຈຸດປະສົງ	ເພື່ອກຳນົດຫຼັກການ ກ່ຽວກັບການຄຸ້ມຄອງ ແລະ ນຳໃຊ້ກຳມະສິດໃຫ້ມີຄວາມ ຖືກຕ້ອງຕາມກົດໝາຍ.

ຕົວຢ່າງ	**1.** ອາຄານ, ຫ້ອງການ ແລະ ພາຫະນະຮັບໃຊ້ຕ່າງໆ ທີ່ຢູ່ໃນການຄອບຄອງ ຂອງລັດນັ້ນ ຖືວ່າລັດເປັນເຈົ້າກຳມະສິດພຽງຜູ້ດຽວ ແຕ່ລັດໄດ້ມອບບັນດາ ອາຄານ, ພາຫະນະຮັບໃຊ້ຕ່າງໆນັ້ນໃຫ້ ບັນດາກະຊວງ ຫຼື ອົງການຈັດຕັ້ງຂອງ ລັດເປັນຜູ້ຄຸ້ມຄອງ, ນຳໃຊ້ ແລະ ໄດ້ຮັບໝາກຜົນ. **2.** ຊັບສິນຂອງກະຊວງ **ກ** ລວມມີອາຄານ, ຫ້ອງການ ແລະ ພາຫະນະ ຮັບໃຊ້ຕ່າງໆ ນອກຈາກກະຊວງ **ກ** ຈະມີສິດໃນການຄອບຄອງ, ນຳໃຊ້, ໄດ້ຮັບໝາກຜົນແລ້ວ ກະຊວງ **ກ** ກໍຍັງມີສິດເອົາທີ່ດິນທີ່ຕົນຖືສິດນຳໃຊ້ນັ້ນ ໄປເຮັດສັນຍາສຳປະທານໃຫ້ ບໍລິສັດ **ຂ** ເພື່ອມາຕັ້ງເປັນຫ້ອງການຂອງ ບໍລິສັດ **ຂ** ເພື່ອກິດຈະການໃດໜຶ່ງ. **3.** ຫ້ອງປະຊຸມໃຫຍ່ ທີ່ຢູ່ພາຍໃຕ້ການຄຸ້ມຄອງ ຂອງອົງການຈັດຕັ້ງລັດ, ອົງ ການຈັດຕັ້ງລັດດັ່ງກ່າວນັ້ນ ສາມາດໃຫ້ການບໍລິການຫ້ອງປະຊຸມ ໃຫ້ແກ່ນິຕິ ບຸກຄົນ ຫຼື ອົງການຈັດຕັ້ງອື່ນໆ ທັງພາກລັດ ແລະ ເອກະຊົນ ເພື່ອສ້າງລາຍຮັບ ເຂົ້າອົງການຈັດຕັ້ງນັ້ນ.
ເຫດຜົນໃນການຮັກສາເດີມ	ມາດຕານີ້ຮັກສາເນື້ອໃນເດີມຂອງ ມາດຕາ 3 ກົດໝາຍວ່າດ້ວຍກຳມະສິດ ປີ 1990. ແຕ່ກົດໝາຍວ່າດ້ວຍຊັບສິນຂອງລັດ ກຳນົດຫຼັກການສະເພາະກ່ຽວ ກັບການນຳໃຊ້ ແລະ ການໄດ້ຮັບໝາກຜົນລວມ ທັງການຊື້ຂາດຊັບທີ່ຢູ່ໃນກຳ ມະສິດຂອງລັດເປັນອັນສະເພາະ.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງ ຂອງປະເທດອື່ນ	ມາດຕາ 198 ແລະ 199 ຂອງປະມວນກົດໝາຍແພ່ງຫວຽດນາມ.
ມາດຕາອ້າງອີງ	ມາດຕາ 5, 14, 21, 22, 23, 24, 25 ແລະ 26 ຂອງກົດໝາຍວ່າດ້ວຍຊັບ ສິນຂອງລັດປີ 2012.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 263 ເປົ້າໝາຍກຳມະສິດຂອງລັດ

ກຳມະສິດຂອງລັດ ມີ ສອງປະເພດ ຄື:

1. ບັນດາພື້ນຖານວັດຖຸເຕັກນິກຂອງສັງຄົມ ທີ່ຂຶ້ນກັບການຄຸ້ມຄອງຂອງລັດ ເຊັ່ນ: ໂຮງຈັກ, ໂຮງງານ, ພາຫະນະຂົນສົ່ງທາງບົກ, ທາງນ້ຳ ແລະ ທາງອາກາດ, ພາຫະນະສື່ສານ, ໄປສະນີ, ທະນາຄານ, ວິ ສາຫະກິດ ແລະ ອື່ນໆ ທີ່ເປັນຂອງລັດ;

2. ບັນດາຊັບທີ່ໃຊ້ໃນການເຄື່ອນໄຫວຂອງກົງຈັກລັດ ເຊັ່ນ ອາຄານ, ລົດ, ໂຕະ, ຕັ່ງ, ຊັບສິນ ທາງປັນຍາ ແລະ ອື່ນໆ.

ສຳລັບທີ່ດິນ, ແຮ່ທາດ, ນ້ຳ, ອາກາດ, ປ່າໄມ້, ເຄື່ອງປ່າຂອງດົງ, ສັດນ້ຳ, ສັດປ່າ, ຊັບພະຍາກອນ ທຳມະຊາດອື່ນ ເປັນກຳມະສິດຂອງວົງຄະນະຍາດແຫ່ງຊາດ ຊຶ່ງລັດເປັນຕົວແທນ ແລະ ຄຸ້ມຄອງຢ່າງລວມສູນ ເປັນເອກະພາບໃນຂອບເຂດທົ່ວປະເທດຕາມກົດໝາຍ.

ຈຸດປະສົງ	ເພື່ອກຳນົດເປົ້າໝາຍກຳມະສິດ ຂອງລັດໃຫ້ຄົບຖ້ວນ.
ຕົວຢ່າງ	1. ບັນດາພື້ນຖານວັດຖຸເຕັກນິກຂອງສັງຄົມ ທີ່ຂຶ້ນກັບການຄຸ້ມຄອງຂອງ ລັດ ເຊັ່ນ: ບໍລິສັດໄຟຟ້າລາວ, ບໍລິສັດການບິນລາວ, ບໍລິສັດນ້ຳປະປາ, ທະນາຄານການຄ້າຕ່າງປະເທດ ຊຶ່ງເອີ້ນວ່າລັດວິສາຫະກິດ. **2.** ບັນດາອາຄານ, ພາຫະນະຮັບໃຊ້ຕ່າງໆ ຂອງກະຊວງ, ກົມ, ຫ້ອງການ ແລະ ອົງການຈັດຂອງລັດນັ້ນ ແມ່ນຊັບສິນທີ່ເປັນເປົ້າໝາຍກຳມມະສິດຂອງລັດ.

ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 4 ຂອງກົດໝາຍວ່າດ້ວຍກຳມະສິດ ປີ 1990 ໂດຍເພີ່ມຄຳວ່າ: ຊັບສິນທາງປັນຍາ ເຂົ້າໃນຊັບທີ່ໃຊ້ໃນການເຄື່ອນໄຫວຂອງກົງຈັກລັດ ແລະ ເພີ່ມແຮ່ທາດ ແລະ ເຄື່ອງປ່າຂອງດົງ ເຂົ້າໃນຊັບພະຍາກອນທຳມະຊາດອື່ນທີ່ເປັນກຳມະສິດ ຂອງວົງຄະນາຍາດແຫ່ງຊາດພ້ອມທັງໄດ້ລຶບລ້າງວັກສຸດທ້າຍອອກ ຊຶ່ງກຳນົດว่า ອົງການຈັດຕັ້ງອື່ນ, ຫົວໜ່ວຍເສດຖະກິດ ຫຼື ບຸກຄົນນັ້ນ ອາດຈະທຳການໂອນ ຫຼື ສືບທອດທີ່ດິນກໍໄດ້ ແຕ່ບໍ່ໃຫ້ນຳອອກຊື້ຂາຍ ຍ້ອນว່າ ມາດຕານີ້ເວົ້າເຖິງເປົ້າໝາຍກຳມະສິດ ສ່ວນບົດບັນຍັດກ່ຽວກັບການຊື້ຂາຍ, ໂອນສິດນຳໃຊ້ທີ່ດິນ ໄດ້ຮັບການປັບປຸງຕາມກົດໝາຍว่าด้ວຍທີ່ດິນ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 197 ຂອງປະມວນກົດໝາຍແພ່ງ ຫວຽດນາມ.
ມາດຕາອ້າງອີງ	ມາດຕາ 52, 59 ຂອງກົດໝາຍว่าด้ວຍທີ່ດິນ ປີ 2003; ມາດຕາ 4 ຂອງກົດໝາຍว่าด้ວຍສັດນ້ຳ ແລະ ສັດປ່າ ປີ 2007; ມາດຕາ 4 ຂອງກົດໝາຍว่าด้ວຍນ້ຳ ແລະ ຊັບພະຍາກອນແຫຼ່ງນ້ຳ ປີ 2017; ມາດຕາ 2 ຂອງກົດໝາຍว่าด้ວຍຊັບສິນຂອງລັດ ປີ 2012;
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 264 ການໄດ້ມາເປັນກຳມະສິດຂອງລັດ

ກຳມະສິດຂອງລັດ ໄດ້ມາຈາກ:

1. ການຫັນປ່ຽນກຳມະສິດມາເປັນຂອງລັດ;
2. ການກໍ່ສ້າງຂອງອົງການຈັດຕັ້ງ ແລະ ວິສາຫະກິດຂອງລັດ;
3. ການເກັບພາສີ, ອາກອນຂອງລັດ;
4. ການເໝົາຊື້ຊັບສິ່ງຂອງດ້ວຍຄວາມຈຳເປັນ;
5. ການຮິບຊັບ ແລະ ວັດຖຸສິ່ງຂອງ;
6. ການໄດ້ຊັບສິ່ງຂອງທີ່ບໍ່ມີເຈົ້າຂອງ;
7. ການເກັບຂອງຕົກເຮ່ຍ;
8. ການພົບເຫັນວັດຖຸມີຄ່າ;
9. ການໄດ້ສັດທີ່ຂາດການຮັກສາ;
10. ການຊື້ ແລະ ການແລກປ່ຽນ;
11. ການມອບຊັບສິ່ງຂອງໃຫ້ລັດ;
12. ການສືບທອດມູນມໍຣະດົກ;
13. ກໍລະນີອື່ນທີ່ກົດໝາຍໄດ້ກຳນົດໄວ້.

ຈຸດປະສົງ	ເພື່ອກຳນົດພື້ນຖານ ຂອງການໄດ້ມາເປັນກຳມະສິດຂອງລັດ.
ຕົວຢ່າງ	**1. ການຫັນປ່ຽນກຳມະສິດມາເປັນຂອງລັດ:** **ກ** ມີດິນໜຶ່ງຕອນ, ຊຶ່ງດິນຕອນດັ່ງກ່າວນັ້ນ ໄດ້ມີໂຄງການກໍ່ສ້າງເສັ້ນທາງລົດໄຟ ຕັດຜ່ານ, ຊຶ່ງເຫັນວ່າມີຄວາມຈຳເປັນຈະຕ້ອງໄດ້ນຳໃຊ້ດິນຕອນດັ່ງກ່າວນັ້ນ ລັດ ຈຶ່ງໄດ້ຂໍ ຊື້ ຫຼື ເວນດິນຄືນທີ່ດິນ ຕອນດັ່ງກ່າວຄືນໃຫ້ລັດ. **2. ການກໍ່ສ້າງຂອງອົງການຈັດຕັ້ງ ແລະ ວິສາຫະກິດຂອງລັດ:** ກະຊວງ, ກົມກອງ ຫຼື ວິສາຫະກິດຂອງລັດ ໄດ້ທຳການກໍ່ສ້າງອາຄານ ເພື່ອນຳ ໃຊ້ເປັນຫ້ອງການເຕີ່ມອີກ ຈຳນວນ 1 ອາຄານ ດັ່ງນັ້ນ ອາຄານ ຫຼື ສິ່ງກໍ່ສ້າງດັ່ງ ກ່າວນັ້ນກໍແມ່ນເປັນກຳມະສິດຂອງລັດ **3. ການເກັບພາສີອາກອນຂອງລັດ:** **ກ** ດຳເນີນທຸລະກິດໂຮງງານນ້ຳດື່ມ ຊຶ່ງໃນແຕ່ລະປີນັ້ນ **ກ** ຕ້ອງໄດ້ປະຕິບັດ ພັນທະຕາມກົດໝາຍ, ດັ່ງນັ້ນ ຄ່າອາກອນທີ່ **ກ** ໄປຖອກໃຫ້ລັດນັ້ນ ຖືວ່າ ແມ່ນກຳມະສິດຂອງລັດ. **4. ການເຫມົາຊື້ຊັບສິ່ງຂອງດ້ວຍຄວາມຈຳເປັນ:** ບໍລິສັດ **ກ** ເປັນບໍລິສັດຜະລິດຫົວອາຫານສັດ ດັ່ງນັ້ນ, ບໍລິສັດດັ່ງກ່າວຈຶ່ງໄດ້ ໄປຕົກລົງເຮັດສັນຍາ ນຳປະຊາຊົນໃນເມືອງ **ຂ** ເພື່ອໃຫ້ປະຊາຊົນພາຍໃນບ້ານ ນັ້ນປູກສາລີ ແລ້ວບໍລິສັດ **ກ** ຈະມາຮັບຊື້, ພາຍຫຼັງທີ່ປະຊາຊົນໄດ້ປູກ ແລະ ເກັບກ່ຽວສາລີມາໝົດ ແລ້ວບໍລິສັດ **ກ** ບໍ່ໄດ້ມາຮັບຊື້ສິນຄ້າຕາມສັນຍາ ຍ້ອນບໍລິສັດດັ່ງກ່າວ ຖືກສານຕັດສິນວ່າເປັນບໍລິສັດລົ້ມລະລາຍໄປແລ້ວ. ດັ່ງນັ້ນ ເພື່ອເປັນການແກ້ໄຂບັນຫາ ຂອງປະຊາຊົນ ລັດຈຶ່ງມີຄວາມຈຳເປັນຕ້ອງໄດ້ຊື້ ສາລີທີ່ເປັນສິນຄ້າຂອງປະຊາຊົນໃນບ້ານນັ້ນ ເພື່ອແກ້ໄຂຊີວິດການເປັນຢູ່ຂອງ ປະຊາຊົນໃນບ້ານນັ້ນ ຊຶ່ງສາລີທີ່ລັດໄດ້ຊື້ມານັ້ນເປັນກຳມະສິດຂອງລັດ. **5. ການຮິບຊັບ ແລະ ວັດຖຸສິ່ງຂອງ:** **ກ** ຖືກສານຕັດສິນຄະດີຢາເສບຕິດ, ໃນເວລາຂົນສົ່ງຢາເສບຕິດນັ້ນ **ກ** ໄດ້ນຳໃຊ້ ລົດໃຫຍ່ໜຶ່ງຄັນ, ຊຶ່ງລົດຄັນດັ່ງກ່າວ ແມ່ນເປັນພາຫະນະທີ່ໃຊ້ ເຂົ້າໃນການກະ ທຳຜິດ, ສະນັ້ນ ລັດຈຶ່ງໄດ້ຮິບເອົາລົດທີ່ເປັນພາຫະນະໃນການຂົນສົ່ງນັ້ນ ເຂົ້າ ເປັນກຳມະສິດຂອງລັດ. **6. ການໄດ້ຊັບສິ່ງຂອງທີ່ບໍ່ມີເຈົ້າຂອງ:** ມີເຮືອນໜຶ່ງຫຼັງ, ຊຶ່ງ **ກ** ໄດ້ໄປເຮັດວຽກ ແລະ ດຳລົງຊີວິດຢູ່ຕ່າງປະເທດ. **ກ** ບໍ່ມີ ຍາດພີ່ນ້ອງທີ່ຈະມາສືບທອດເຮືອນດັ່ງກ່າວນັ້ນ **ກ** ຈຶ່ງໄດ້ສະລະກຳມະສິດຢ່າງ ເປີດເຜີຍ. ດ້ວຍເຫດນັ້ນ ກະຊວງທີ່ກ່ຽວຂ້ອງ ຈຶ່ງສະເໜີໃຫ້ສານຕັດສິນເຮືອນ ດັ່ງ ກ່າວນັ້ນເປັນກຳມະສິດຂອງລັດ. **7. ການເກັບຂອງຕົກເຮ່ຍ:** **ກ** ເກັບໄດ້ໂນດບຸກໜຶ່ງໜ່ວຍ ທີ່ໄດ້ຕົກເຮ່ຍຢູ່ຕາມທາງຕໍ່ມາ **ກ** ໄດ້ນຳເອົາໂນດ ບຸກໄປແຈ້ງ ແລະ ມອບໃຫ້ແກ່ເຈົ້າໜ້າທີ່ຕຳຫຼວດ ຫຼື ອຳນາດການປົກຄອງບ້ານ ເພື່ອປະກາດຫາເຈົ້າຂອງຊັບສິ່ງຂອງ ໃຫ້ມາຮັບເອົາ.

	ໃນຊ່ວງໄລຍະເວລາດັ່ງກ່າວນັ້ນ ເຈົ້າຂອງໂນດບຸກບໍ່ໄດ້ທວງເອົາຊັບສິ່ງຂອງຕົນຄືນ ແລະ **ກ** ກໍປະຕິເສດ ບໍ່ຮັບເອົາໂນດບຸກທີ່ຕົນເກັບໄດ້ນັ້ນ. ສະນັ້ນ ໂນດບຸກດັ່ງກ່າວນັ້ນ ຈຶ່ງຕົກເປັນກຳມະສິດຂອງລັດ. **8. ການພົບເຫັນວັດຖຸທີ່ມີຄ່າ:** **ກ** ໄດ້ພົບເຫັນວັດຖຸບູຮານ ທີ່ຢູ່ພື້ນດິນໃນເວລາທີ່ **ກ** ທຳການກໍ່ສ້າງນັ້ນ. **ກ** ຈຶ່ງໄດ້ແຈ້ງໃຫ້ບ້ານ ແລ້ວຕໍ່ມາ **ກ** ໄດ້ມອບວັດຖຸບູຮານນັ້ນ ໃຫ້ກະຊວງທີ່ກ່ຽວຂ້ອງເປັນຜູ້ຄຸ້ມຄອງ ແລະ ນຳໃຊ້, ກໍລະນີນີ້ຖືວ່າ ວັດຖຸບູຮານທີ່ **ກ** ໄດ້ມອບໃຫ້ກະຊວງທີ່ກ່ຽວຂ້ອງນັ້ນ ຖືວ່າເປັນກຳມະສິດຂອງລັດ. **9. ການໄດ້ສັດທີ່ຂາດການຮັກສາ:** **ກ** ຈັບໄດ້ ງົວ ໜຶ່ງໂຕທີ່ບໍ່ຮູ້ວ່າໃຜເປັນເຈົ້າຂອງ, **ກ** ໄດ້ແຈ້ງໃຫ້ຫ້ອງການບ້ານເພື່ອແຈ້ງຊອກຫາໃຫ້ເຈົ້າຂອງ ງົວ ໃຫ້ມາຮັບເອົາ. ພາຍຫຼັງທີ່ນາຍບ້ານໄດ້ດຳເນີນການແຈ້ງຕາມຂັ້ນຕອນ ແລະ ເວລາກໍໄດ້ຜ່ານໄປ ສາມເດືອນແລ້ວແຕ່ກໍຍັງບໍ່ມີບຸກຄົນໃດມາຮັບເອົາ, ດັ່ງນັ້ນ **ກ** ຈຶ່ງໄດ້ມອບ ງົວໂຕນັ້ນໃຫ້ເປັນຊັບສິນຂອງຫ້ອງການບ້ານ. ກໍລະນີນີ້ໃຫ້ຖືວ່າ ງົວ ໂຕນັ້ນເປັນກຳມະສິດຂອງລັດ. **10. ການຊື້ ແລະ ການແລກປ່ຽນ:** ກະຊວງ **ກ** ໄດ້ເຮັດສັນຍາຊື້ຂາຍ ສິດນຳໃຊ້ທີ່ດິນ ຈຳນວນ 1 ເຮັກຕ່ານຳ **ຂ** ເພື່ອມາກໍ່ສ້າງເປັນຫ້ອງການ ແລະ ສະຖານທີ່ຈອດລົດຂອງກະຊວງ ໃນກໍລະນີນີ້ ຖືວ່າທີ່ດິນທີ່ໄດ້ເຮັດສັນຍາຊື້ຂາຍນຳ **ຂ** ນັ້ນ ເປັນກຳມະສິດຂອງລັດ. **11. ການມອບຊັບສິ່ງຂອງໃຫ້ລັດ:** ບໍລິສັດ **ກ** ໄດ້ມອບລົດໜຶ່ງຄັນໃຫ້ແກ່ ກະຊວງ **ຂ** ເພື່ອເປັນພາຫະນະຮັບໃຊ້ໃຫ້ແກ່ ພະນັກງານຂອງກະຊວງ, ດັ່ງນັ້ນ ຖືວ່າລົດທີ່ບໍລິສັດ **ກ** ມອບໃຫ້ກະຊວງນັ້ນ ແມ່ນເປັນກຳມະສິດຂອງລັດ. **12. ການສືບທອດມູນມໍຣະດົກ:** **ກ** ມີເຮືອນໜຶ່ງຫຼັງ ພ້ອມດ້ວຍດິນໜຶ່ງຕອນ **ກ** ເສຍຊີວິດດ້ວຍອຸບປະຕິເຫດ ຫຼັງຈາກທີ່ **ກ** ເສຍຊີວິດແລ້ວ ກໍບໍ່ມີໃຜມາທວງຖາມ ກ່ຽວກັບມູນມໍຣະດົກຂອງ **ກ** ຕາມມາດຕາ 585 ຂອງປະມວນກົດໝາຍແພ່ງ, ໃນກໍລະນີນີ້ ຖ້າຫາກວ່າ **ກ** ບໍ່ມີຜູ້ສືບທອດມູນແລ້ວ ເຮືອນພ້ອມດ້ວຍດິນຕອນດັ່ງກ່າວນັ້ນ ກໍຈະຕົກເປັນກຳມະສິດຂອງລັດຕາມມາຕາ 608 ຂອງປະມວນກົດໝາຍແພ່ງ. **13. ກໍລະນີອື່ນທີ່ກົດໝາຍໄດ້ກຳນົດໄວ້:** ຊັບສິ່ງຂອງ ທີ່ໄດ້ມາຈາກການຮີບຊັບ ຕາມມາດຕາ 52 ຂອງປະມວນກົດໝາຍອາຍາ
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 5 ຂອງກົດໝາຍວ່າດ້ວຍກຳມະສິດ ສະບັບປີ 1990 ໂດຍເພີ່ມຂໍ້ທີ່ 13 ເຂົ້າເພື່ອເປັນກໍລະນີຍົກເວັ້ນ ທີ່ບໍ່ໄດ້ກ່າວເຖິງໃນ 12 ກໍລະນີຂ້າງເທິງນັ້ນ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 221 ຂອງປະມວນກົດໝາຍແພ່ງ.

ມາດຕາອ້າງອີງ	ມາດຕາ 4 ຂອງກົດໝາຍວ່າດ້ວຍຊັບສິນຂອງລັດ ປີ 2012; ມາດຕາ 300, 301, 303 ແລະ 585 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 265 ການຊື້ຂາດກ່ຽວກັບອະສັງຫາລິມະຊັບຂອງລັດ

ໃນການຊື້ຂາດກ່ຽວກັບວິສາຫະກິດ, ອາຄານ, ສິ່ງປຸກສ້າງ, ວັດຖຸປະກອນ ແລະ ຊັບສິ່ງຂອງອື່ນ ທີ່ເປັນອະສັງຫາລິມະຊັບຂອງອົງການຈັດຕັ້ງຂອງລັດ ໃຫ້ອົງການຈັດຕັ້ງອື່ນຂອງລັດ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

ຊັບສິ່ງຂອງທີ່ກ່າວມາເທິງນີ້ ບໍ່ອະນຸຍາດໃຫ້ມອບໃຫ້ບຸກຄົນໃດໜຶ່ງເປັນເຈົ້າກຳມະສິດໄດ້, ເວັ້ນເສຍແຕ່ ອະສັງຫາລິມະຊັບບາງຢ່າງທີ່ຂາຍໃຫ້ ຕາມລະບຽບການເທົ່ານັ້ນ.

ຈຸດປະສົງ	ເພື່ອກຳນົດ ຫຼັກການລະບຽບການຊື້ຂາດ ກ່ຽວກັບອະສັງຫາລິມະຊັບ ຂອງອົງການຈັດຕັ້ງລັດ
ຕົວຢ່າງ	**1.** ອາຄານ, ເຮືອນພັກ ຫຼື ຫ້ອງການ ຂອງອົງການຈັດຕັ້ງລັດ ແມ່ນຢູ່ພາຍໃຕ້ການຄຸ້ມຄອງຂອງກະຊວງການເງິນ, ຖ້າອົງການຈັດຕັ້ງນັ້ນຕ້ອງການມອບ-ໂອນອາຄານຂອງຕົນ ໃຫ້ແກ່ອົງການຈັດຕັ້ງລັດອື່ນ ຫຼື ບຸກຄົນ, ນິຕິບຸກຄົນອື່ນນັ້ນ, ກະຊວງການເງິນ ຈະເປັນຜູ້ສະເໜີ ຕໍ່ລັດຖະບານເພື່ອພິຈາລະນາ ໃນການມອບ-ໂອນຊັບສິນ ຂອງລັດດັ່ງກ່າວ. **2.** ເຮືອນພັກພະນັກງານ ທີ່ອົງການຈັດຕັ້ງລັດ ມີນະໂຍບາຍໃຫ້ເປັນທີ່ຢູ່ອາໃສ ຂອງພະນັກງານໃນໄລຍະເວລາປະຕິບັດໜ້າທີ່ວຽກງານຫຼືດຳລົງຕຳແໜ່ງໃດໜຶ່ງ ແຕ່ພາຍຫຼັງຜູ້ກ່ຽວກະສຽນບຳນານແລ້ວ ແມ່ນຈະຕ້ອງໄດ້ສົ່ງເຮືອນດັ່ງກ່າວນັ້ນ ໃຫ້ແກ່ອົງການຈັດຕັ້ງລັດ, ເວັ້ນເສຍແຕ່ອົງການຈັດຕັ້ງລັດ ຈະມີນະ�โยบายขายເຮືອນດັ່ງກ່າວນັ້ນໃຫ້ຜູ້ກ່ຽວຕາມລະບຽບການ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 6 ກົດໝາຍວ່າດ້ວຍກຳມະສິດ ປີ 1990 ໂດຍປັບປຸງທາງດ້ານຄຳສັບໃຫ້ມີຄວາມຈະແຈ້ງ ແລະ ຊັດເຈນຂຶ້ນ ໂດຍປ່ຽນຄຳສັບ ໃຫ້ຖືກຕາມຫຼັກໄວຍະກອນ ຈາກຄຳສັບທີ່ວ່າ: ວັດຖຸປະກອນ ມາເປັນວັດຖຸອຸປະກອນ (ວັດຖຸ+ອຸປະກອນ).
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 14 ຂອງກົດໝາຍວ່າດ້ວຍຊັບສິນຂອງລັດປີ 2012.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 266 ການຊື້ຂາດກ່ຽວກັບຊັບໝຸນວຽນ ແລະ ຜະລິດຕະພັນ

ອົງການຈັດຕັ້ງຂອງລັດເປັນຜູ້ຊື້ຂາດກ່ຽວກັບ ວັດຖຸດິບ, ວັດຖຸປະກອນ, ເງິນ ແລະ ຊັບໝຸນວຽນອື່ນ ແລະ ຜະລິດຕະພັນປຸງແຕ່ງ ຢ່າງສອດຄ່ອງກັບຄຸນປະ�โยชน์ຂອງຊັບສິ່ງຂອງນັ້ນ ແລະ ຕາມແຜນການທີ່ໄດ້ວາງອອກ.

ບໍ່ມີບຸກຄົນໃດ ມີສິດນຳໃຊ້ຊັບສິ່ງຂອງທີ່ເປັນກຳມະສິດຂອງລັດ ເພື່ອຫາຜົນປະโยชน์ໃຫ້ແກ່ຕົນເອງ.

ຈຸດປະສົງ	ເພື່ອກຳນົດຫຼັກການ ລະບຽບການຊື້ຂາດ ກ່ຽວກັບຊັບໝູນວຽນ ແລະ ຜະລິດຕະພັນ.
ຕົວຢ່າງ	**1.** ອົງການຈັດຕັ້ງລັດ ເປັນຜູ້ມີສິດຊື້ຂາດ ກ່ຽວກັບຊັບສິນຂອງຫ້ອງການເຊັ່ນ: ການນຳໃຊ້ງົບປະມັນຂອງຫ້ອງການ, ການຂາຍເຄື່ອງຮັບໃຊ້ຫ້ອງການ ຫຼື ຂາຍຊັບສິນຂອງຫ້ອງການທີ່ບໍ່ນຳໃຊ້ແລ້ວອອກ. **2. ກ** ເປັນພະນັກງານຂັບລົດ ຢູ່ຫ້ອງການ **ຂ, ກ** ມີສິດນຳໃຊ້ພາຫະນະນັ້ນ ຮັບໃຊ້ພະນັກງານໃນຫ້ອງການ ແຕ່ **ກ** ບໍ່ມີສິດນຳເອົາລົດດັ່ງກ່າວນັ້ນ ໄປໃຫ້ບຸກຄົນອື່ນເຊົ່າ ເພື່ອຫາຜົນປະໂຫຍດສ່ວນຕົວ.
ເຫດຜົນໃນການຮັກສາເດີມ	ມາດຕານີ້ຮັກສາເນື້ອໃນທັງໝົດຂອງ ມາດຕາ 7 ກົດໝາຍວ່າດ້ວຍກຳມະສິດ ປີ 1990 ພຽງແຕ່ປ່ຽນຄຳສັບໃຫ້ຖືກຕາມຫຼັກໄວຍະກອນ ຈາກຄຳສັບ ວັດຖຸ ປະກອນ ມາເປັນວັດຖຸອຸປະກອນ (ວັດຖຸ+ອຸປະກອນ).
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 14 ຂອງກົດໝາຍວ່າດ້ວຍຊັບສິນຂອງລັດປີ 2012.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 267 ການບໍ່ອະນຸຍາດໃຫ້ ຮິບ ຫຼື ຍຶດຊັບສິ່ງຂອງ ຂອງລັດ

ວິສາຫະກິດ, ອາຄານ, ສິ່ງປຸກສ້າງ, ວັດຖຸປະກອນ ແລະ ຊັບສິ່ງຂອງອື່ນ ທີ່ເປັນສັງຫະລິມະຊັບ ຂອງອົງການຈັດຕັ້ງຂອງລັດ ບໍ່ຖືກ ຮິບ ຫຼື ຍຶດໄດ້, ເວັ້ນເສຍແຕ່ພາຫະນະທາງດ້ານການເງິນ ແລະ ຊັບສິ່ງຂອງອື່ນ ທີ່ໄດ້ກຳນົດໄວ້ໃນກົດໝາຍເທົ່ານັ້ນ.

ສຳລັບຊັບສິ່ງຂອງຂອງລັດ ທີ່ຢູ່ຕ່າງປະເທດ ກໍໃຫ້ປະຕິບັດດັ່ງດຽວກັນກັບຊັບສິ່ງຂອງຂອງລັດ ທີ່ຢູ່ພາຍໃນປະເທດ.

ການທວງເອົາຊັບສິ່ງຂອງຂອງລັດຈາກຜູ້ຄອບຄອງໂດຍບໍ່ຖືກຕ້ອງນັ້ນ ຈະດຳເນີນເວລາໃດກໍໄດ້ ໂດຍບໍ່ມີອາຍຸຄວາມໃນການຮ້ອງຟ້ອງທາງແພ່ງ.

ຈຸດປະສົງ	ເພື່ອກຳນົດ ຫຼັກການກ່ຽວກັບການບໍ່ອະນຸຍາດ ໃຫ້ຮິບຊັບສິ່ງຂອງຂອງລັດ ທີ່ຢູ່ພາຍໃນ ແລະ ຕ່າງປະເທດ ລວມທັງການທວງເອົາຊັບຂອງລັດຈາກຜູ້ຄອບຄອງໂດຍບໍ່ຖືກຕ້ອງ.
ຕົວຢ່າງ	**ກ** ນຳໃຊ້ລົດຂອງລັດ ທີ່ຕົນຄອບຄອງນັ້ນໄປຄ້າອາວຸດ ຫຼື ຢາເສດຕິດ, ເມື່ອເຈົ້າໜ້າທີ່ຈັບໄດ້ມາດຳເນີນຄະດີ ກໍລະນີນີ້ ລົດຄັນທີ່ **ກ** ນຳໃຊ້ເຂົ້າໃນການກະທຳຜິດນັ້ນຈະບໍ່ຖືກຮິບ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 8 ກົດໝາຍວ່າດ້ວຍກຳມະສິດ ປີ 1990 ຊຶ່ງກົດໝາຍເມື່ອກ່ອນແມ່ນກຳນົດແຕ່ຊັບສິ່ງຂອງອື່ນຂອງລັດເປັນຊັບຄົງທີ່ ໂດຍ ມາດຕານີ້ ກ່າວເຖິງຊັບສິ່ງຂອງອື່ນ ຂອງລັດທີ່ເປັນສັງຫາລິມະຊັບ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນ	ສືບຕໍ່ຄົ້ນຄວ້າ.

ຂ. ກຳມະສິດລວມໝູ່

ມາດຕາ 268 ກຳມະສິດລວມໝູ່

ກຳມະສິດລວມໝູ່ ມີພາຫະນະການຜະລິດ ແລະ ຊັບສິ່ງຂອງອື່ນທີ່ຈຳເປັນສຳລັບການປະຕິບັດໜ້າທີ່ວຽກງານຂອງຕົນ ເຊັ່ນ ເຄື່ອງຈັກ, ພາຫະນະຂົນສົ່ງ, ລົດດຸດ, ລົດໄຖ, ສັດ, ອາຄານ, ສິ່ງປຸກສ້າງ, ວິສາຫະກິດ, ເຮືອນພັກຜ່ອນ, ທຶນຄົງທີ່, ທຶນໝຸນວຽນ ແລະ ອື່ນໆ.

ກຳມະສິດລວມໝູ່ ແບ່ງອອກເປັນກຳມະສິດຂອງສະຫະກອນ ແລະ ຂອງອົງການຈັດຕັ້ງລວມໝູ່ອື່ນ.

ຈຸດປະສົງ	ເພື່ອກຳນົດເປົ້າໝາຍ ຂອງກຳມະສິດ ຂອງສະຫະກອນ ແລະ ອົງການຈັດຕັ້ງລວມໝູ່ອື່ນ.
ຕົວຢ່າງ	ບ້ານ **ກ** ມີໄດ້ມີການຈັດຕັ້ງເປັນກຸ່ມ ໃນຮູບແບບສະຫະກອນ ເພື່ອຜະລິດພັກປອດສັນຜິດ ຊຶ່ງເປັນການລວມຕົວຂອງກຸ່ມແມ່ບ້ານ, ໃນນັ້ນຊັບສິນຂອງອົງການຈັດຕັ້ງ ຫຼື ສະຫະກອນດັ່ງກ່າວ ລວມມີທີ່ດິນມີເນື້ອທີ 20 ເຮັກຕາ, ລົດໄຖນາ 1ຄັນ, ລົດຂົນສົ່ງ 2ຄັນ, ເງິນທີ່ເປັນທຶນຄົງທີ່ 200.000.000ກີບ, ທຶນໝຸນວຽງຈຳນວນ 300.000.000 ກີບ ແລະ ອຸປະກອນຮັບໃຊ້ຕ່າງໆຈຳນວນໜຶ່ງ ຊຶ່ງຊັບສິນທັງໝົດນັ້ນແມ່ນກຳມະສິດລວມໝູ່
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 9 ກົດໝາຍວ່າດ້ວຍກຳມະສິດ ປີ 1990 ໂດຍປັບປຸງສັບພາສາໃຫ້ສອດຄ່ອງກັບ ຫົວຂໍ້ຂອງມາດຕາ ແລະ ນຳເອົາເນື້ອໃນຂອງວັກ 2 ຂອງມາດຕາ 2 ຂອງກົດໝາຍວ່າດ້ວຍກຳມະສິດ ປີ 1990 ມາເພີ່ມໃສ່ວັກ 2 ຂອງມາດຕານີ້ໃຫ້ຄົບຖ້ວນ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 208 ຂອງປະມວນກົດໝາຍແພ່ງ ຫວຽດນາມ.
ມາດຕາອ້າງອີງ	ມາດຕາ 261 ຂໍ້ 2 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ຂໍ້ມູນອື່ນ	ສືບຕໍ່ຄົ້ນຄວ້າ.

ມາດຕາ 269 ເນື້ອໃນຂອງກຳມະສິດຂອງສະຫະກອນ ຫຼື ອົງການຈັດຕັ້ງລວມໝູ່ອື່ນ

ສະຫະກອນ ຫຼື ອົງການຈັດຕັ້ງລວມໝູ່ອື່ນ ມີສິດ ຄອບຄອງ, ນຳໃຊ້, ໄດ້ຮັບໝາກຜົນ ແລະ ຊື້ຂາດກ່ຽວກັບຊັບສິ່ງຂອງ ຊຶ່ງເປັນກຳມະສິດຂອງຕົນ ໃນຂອບເຂດທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ປະຕິບັດສິດດັ່ງກ່າວໃຫ້ສອດຄ່ອງກັບກົດລະບຽບຂອງຕົນ.

ສິດຊື້ຂາດກ່ຽວກັບຊັບສິ່ງຂອງນັ້ນ ມອບໃຫ້ສະຫະກອນ ຫຼື ອົງການຈັດຕັ້ງລວມໝູ່ອື່ນ ເປັນຜູ້ປະຕິບັດຢ່າງເປັນເອກະລາດ ແລະ ບໍ່ມີບຸກຄົນໃດຈະສາມາດຊື້ຂາດ ກ່ຽວກັບຊັບສິ່ງຂອງດັ່ງກ່າວໄດ້.

ຈຸດປະສົງ	ເພື່ອກຳນົດເນື້ອໃນຂອງກຳມະສິດຂອງສະຫະກອນ ຫຼື ອົງການຈັດຕັ້ງ ລວມໝູ່.
ຕົວຢ່າງ	ບ້ານ **ກ** ມີໄດ້ມີການຈັດຕັ້ງເປັນກຸ່ມໃນຮູບແບບສະຫະກອນ ເພື່ອຜະລິດພັກປອດສັນຜິດ ຊຶ່ງອົງການຈັດຕັ້ງດັ່ງກ່າວນັ້ນ ໄດ້ມີຊັບສິນລວມມີທີ່ດິນຈຳນວນ 20 ເຮັກຕ່າ, ລົດໄຖນາ 1 ຄັນ, ລົດຂົນສົ່ງ 2 ຄັນ, ເງິນທີ່ເປັນທຶນຄົງທີ່ 200,000,000 ກີບ, ທຶນໝຸນວຽງຈຳນວນ 300,000,000 ກີບ ແລະ ອຸປະກອນຮັບໃຊ້ຕ່າງໆຈຳນວນໜຶ່ງ ຊຶ່ງຊັບສິນທັງໝົດທີ່ກ່າວມານັ້ນ ອົງການຈັດຕັ້ງດັ່ງກ່າວມີສິດ ຄອບຄອງ, ນຳໃຊ້, ໄດ້ຮັບໝາກຜົນ ແລະ ຊື້ຂາດ ກ່ຽວກັບຊັບສິ່ງຂອງ ທີ່ເປັນກຳມະສິດຂອງ ກຸ່ມແມ່ບ້ານ **ກ** ນັ້ນ.
ເຫດຜົນໃນການຮັກສາເດີມ	ມາດຕານີ້ຮັກສາເນື້ອໃນມາດຕາ 10 ກົດໝາຍວ່າດ້ວຍກຳມະສິດ ປີ 1990.

ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 211 ຂອງປະມວນກົດໝາຍແພ່ງ ຫວຽດນາມ.
ມາດຕາອ້າງອີງ	ມາດຕາ 249 ແລະ 250 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 270 ການໄດ້ມາເປັນກຳມະສິດຂອງສະຫະກອນ ຫຼື ອົງການຈັດຕັ້ງລວມໝູ່ອື່ນ

ກຳມະສິດຂອງສະຫະກອນ ຫຼື ອົງການຈັດຕັ້ງລວມໝູ່ອື່ນ ໄດ້ມາຈາກ:

1. ການປະກອບສ່ວນທາງດ້ານຊັບ ຂອງສະມາຊິກແຕ່ລະຄົນ;
2. ການຜະລິດ ແລະ ການບໍລິການ;
3. ການຊື້ ແລະ ການແລກປ່ຽນ;
4. ການຊ່ວຍເຫຼືອທາງດ້ານວັດຖຸ ແລະ ການເງິນຂອງລັດ, ອົງການຈັດຕັ້ງ, ບຸກຄົນ ແລະ ອື່ນໆ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນຮູບແບບ ການໄດ້ມາເປັນກຳມະສິດຂອງສະຫະກອນ ຫຼື ອົງການຈັດຕັ້ງ ລວມໝູ່ອື່ນໆ.
ຕົວຢ່າງ	**1. ການປະກອບສ່ວນທາງດ້ານຊັບ ຂອງສະມາຊິກແຕ່ລະຄົນ;** ກຸ່ມຫັດຖະກຳຕ່ຳແຜ່ນຂອງແມ່ຍິງບ້ານ **ກ** ມີສະມາຊິກທັງໝົດ 37 ຄົນ, ສະມາຊິກແຕ່ລະຄົນໄດ້ປະກອບສ່ວນທາງດ້ານຊັບສິນເຊັ່ນ: ປະກອບສ່ວນກີ່ ຄົນລະ 01 ອັນ ຫຼື ເງິນຜູ້ລະ 5.000.000 ກີບ ຊຶ່ງທັງໝົດນັ້ນແມ່ນ ເປັນກຳມະສິດ ຂອງອົງການຈັດຕັ້ງລວມໝູ່ນັ້ນ. **2. ການຜະລິດ ແລະ ການບໍລິການ;** ກຸ່ມຫັດຖະກຳຕ່ຳແຜ່ນຂອງແມ່ຍິງບ້ານ **ກ** ໄດ້ຕ່ຳແຜ່ນແພຕັດເສື້ອ, ຜ້າພັນຄໍ ແລະ ຜ້າປູໂຕະ ມູນຄ່າຂອງຜະລິດຕະພັນທັງໝົດໄດ້ 200.000.000 ກີບ ເມື່ອຂາຍສິນຄ້າ ແລະ ຈ່າຍຄ່າແຮງງານແລ້ວ ກຳໄລແມ່ນເປັນກຳມະສິດຂອງອົງການຈັດຕັ້ງລວມໝູ່ນັ້ນ. **3. ການຊື້ ແລະ ການແລກປ່ຽນ;** ກຸ່ມສະຫະກອນປູກຜັກປອດສານຜິດເປັນສິນຄ້າບ້ານ **ກ** ໄດ້ເຮັດສັນຍາຊື້ພາຫະນະການຜະລິດ ເຊັ່ນ: ຊື້ລົດໄຖນາ, ລົດຄາດ, ລົດຂົນສົ່ງ ແລະ ອື່ນໆ ຊຶ່ງຊັບສິນທັງໝົດ ທີ່ກຸ່ມສະຫະກອນໄດ້ຊື້ ແລະ ໄດ້ແລກປ່ຽນມານັ້ນແມ່ນ ເປັນກຳມະສິດ ຂອງອົງການຈັດຕັ້ງລວທໝູ່ນັ້ນ. **4. ການຊ່ວຍເຫຼືອທາງດ້ານວັດຖຸ ແລະ ການເງິນຂອງລັດ, ອົງການຈັດຕັ້ງ, ບຸກຄົນ ແລະ ອື່ນໆ**: ກຸ່ມສະຫະກອນປູກຜັກປອດສັນຜິດເປັນສິນຄ້າບ້ານ **ກ** ໄດ້ຮັບການຊ່ວຍເຫຼືອ ຈາກບໍລິສັດກໍ່ສ້າງ **ຂ** ເປັນລົດໄຖນາຈຳນວນ 1 ຄັນ, ບໍລິສັດ **ຄ** ໄດ້ຊ່ວຍເຫຼືອ ເປັນເງິນຈຳນວນ 20.000.000 ກີບ ແລະ ເງິນຊ່ວຍເຫຼືອຈາກບຸກຄົນອື່ນໆ ເປັນ ເງິນ 30.000.000 ກີບ ຊຶ່ງຊັບທີ່ໄດ້ມາຈາກການຊ່ວຍເຫຼືອທັງໝົດນັ້ນ ເປັນກຳມະສິດ ຂອງອົງການຈັດຕັ້ງລວມໝູ່.

ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 11 ກົດໝາຍວ່າດ້ວຍກຳມະສິດ ປີ 1990 ໂດຍປັບປຸງສັບພາສາໃຫ້ຊັດເຈນຂຶ້ນ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 264 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 271 ການນຳໃຊ້ທີ່ດິນທີ່ຂຶ້ນກັບສິດຂອງສະຫະກອນ ຫຼື ອົງການຈັດຕັ້ງລວມໝູ່ອື່ນ

ສະຫະກອນ ຫຼື ອົງການຈັດຕັ້ງລວມໝູ່ອື່ນ ຕ້ອງນຳໃຊ້ທີ່ດິນ ຊຶ່ງຕົນໄດ້ຄອບຄອງນັ້ນຢ່າງຖືກຕ້ອງ, ຖ້າຫາກບໍ່ນຳໃຊ້ໃຫ້ເປັນຜົນປະ�โຫຍດແລ້ວ ສະຫະກອນ ຫຼື ອົງການຈັດຕັ້ງລວມໝູ່ອື່ນ ກໍຈະຖືກປັບໃໝຕາມລະບຽບການຄຸ້ມຄອງ ແລະ ນຳໃຊ້ທີ່ດິນກະສິກຳ ຫຼື ລັດອາດຍຶດເອົາທີ່ດິນຄືນ ແລະ ມອບໃຫ້ຫົວໜ່ວຍເສດຖະກິດອື່ນ ຫຼື ບຸກຄົນອື່ນນຳໃຊ້ ແຕ່ລັດຈະບໍ່ໄດ້ໃຊ້ແທນຄ່າໃດໆໃຫ້ທັງສິ້ນ.

ຈຸດປະສົງ	ເພື່ອກຳນົດການນຳໃຊ້ທີ່ດິນ ຂອງສະຫະກອນ ແລະ ອົງການຈັດຕັ້ງລວມໝູ່ອື່ນຢ່າງມີປະສິດທິຜົນ.
ຕົວຢ່າງ	ສະຫະກອນ **ກ** ໄດ້ຮັບສິດນຳໃຊ້ທີ່ດິນ ຊຶ່ງມີເນື້ອທີ່ 200 ເຮັກຕ່າ ເພື່ອເຮັດການຜະລິດດ້ານກະສິກຳ ຕອບສະໜອງຄວາມຕ້ອງການຂອງສັງຄົມ, ແຕ່ການຜະລິດບໍ່ໄດ້ຕາມຈຸດປະສົງ ເຊັ່ນ: ການຜະລິດໄດ້ໜ້ອຍ ດັ່ງນັ້ນ ຈຶ່ງໄດ້ປະປ່ອຍທີ່ດິນໄວ້ຢ່າງຫຼວງຫຼາຍ ໂດຍບໍ່ໄດ້ທຳການຜະລິດ, ສະນັ້ນ ລັດຈຶ່ງໄດ້ຖອນສິດນຳໃຊ້ທີ່ດິນ ຂອງສະຫະກອນ **ກ** ແລະ ມອບໃຫ້ຫົວໜ່ວຍເສດຖະກິດ ຫຼື ສະຫະກອນອື່ນນຳໃຊ້.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 12 ກົດໝາຍວ່າດ້ວຍກຳມະສິດ ປີ 1990 ໂດຍປັບປຸງສັບພາສາໃຫ້ຊັດເຈນຂຶ້ນ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ຄ. ກຳມະສິດເອກະເທດ

ມາດຕາ 272 ເປົ້າໝາຍກຳມະສິດເອກະເທດ

ກຳມະສິດເອກະເທດ ມີ ພາຫະນະການຜະລິດ, ຜະລິດຕະພັນ ແລະ ສິນຄ້າ ຊຶ່ງເປັນກຳມະສິດສ່ວນບຸກຄົນຂອງເຈົ້າຊັບນ້ອຍ ເຊັ່ນ ຊາວກະສິກອນ, ຊາວຫັດຖະກອນ, ນາຍຊ່າງ ແລະ ອື່ນໆ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນ ກ່ຽວກັບເຈົ້າກຳ ແລະ ວັດຖຸກຳ ຂອງກຳມະສິດເອກະເທດ.
ຕົວຢ່າງ	ຄອບຄົວ **ກ** ມີອາຊີບເປັນຊ່າງຕີເຫຼັກຄື: ຕີຟ້າ, ສຽມ ແລະ ຈົກ ເພື່ອເປັນສິນຄ້າຂາຍຕາມທ້ອງຕະຫຼາດ ໃນການດຳເນີນທຸລະກິດຂອງຄອບຄົວ **ກ** ມີຊັບສິນລວມມີ ລົດຂົນສົ່ງ 1 ຄັນ, ມີອາຄານ ຫຼື �โຮງງານຕີເຫຼັກ ໜຶ່ງອາຄານ, ມີເຄື່ອງຈັກ ແລະ ເຄື່ອງອຸປະກອນຮັບໃຊ້ຈຳນວນໜຶ່ງ ຊຶ່ງທັງໝົດນັ້ນ ຖືໄດ້ວ່າແມ່ນກຳມະສິດເອກະເທດ ຂອງຄອບຄົວ **ກ.**

ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 14 ກົດໝາຍວ່າດ້ວຍກຳມະສິດ ປີ 1990 ໂດຍ ເພີ່ມຄຳວ່າ: ຊາວຫັດຖະກອນ ເຂົ້າໃນເຈົ້າຊັບຂະໜາດນ້ອຍ ພ້ອມທັງ ປັບປຸງສັບພາສາໃຫ້ຊັດເຈນຂຶ້ນ.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 261 ຂໍ້ 3 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 273 ສິດ ແລະ ພັນທະຂອງເຈົ້າກຳມະສິດເອກະເທດ

ເຈົ້າກຳມະສິດເອກະເທດ ມີສິດດຳເນີນ ການຜະລິດ, ການບໍລິການ ແລະ ຈຳໜ່າຍຜະລິດຕະພັນ ຂອງຕົນຢ່າງເສລີຖືກກົດໝາຍ.

ເຈົ້າກຳມະສິດເອກະເທດ ຕ້ອງປະຕິບັດນະໂຍບາຍເສດຖະກິດ, ນະໂຍບາຍອື່ນຂອງລັດ ແລະ ປະຕິບັດພັນທະຕາມກົດໝາຍ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນ ກ່ຽວກັບສິດ ແລະ ພັນທະ ຂອງເຈົ້າກຳໃນກຳມະສິດ ເອກະເທດ.
ຕົວຢ່າງ	ຄອບຄົວ **ກ** ມີອາຊີບເປັນຊ່າງຕີເຫຼັກຄື: ຕີຟ້າ, ສຽມ ແລະ ຈົກ ເພື່ອເປັນສິນຄ້າ ຂາຍດັ່ງນັ້ນ **ກ** ມີສິດດຳເນີນທຸລະກິດຂາຍສິນຄ້າ ຕາມທ້ອງຕະຫຼາດ ຫຼື ສົ່ງອອກ, ແຕ່ **ກ** ຕ້ອງໄດ້ປະຕິບັດພັນທະ ໃຫ້ລັດຄື **ກ** ຕ້ອງໄປເຮັດສັນຍາ ເສຍອາກອນ ໃຫ້ ຫ້ອງການບ້ານ ປີລະ 1.000.000 ກີບ.
ເຫດຜົນໃນການຮັກສາເດີມ	ມາດຕານີ້ຮັກສາເດີມເນື້ອໃນ ມາດຕາ 15 ກົດໝາຍວ່າດ້ວຍກຳມະສິດ ປີ 1990.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 249, ແລະ 250 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ງ. ກຳມະສິດເອກະຊົນ

ມາດຕາ 274 ກຳມະສິດເອກະຊົນ

ກຳມະສິດເອກະຊົນ ມີກຳມະສິດຂອງຫົວໜ່ວຍເສດຖະກິດເອກະຊົນ ແລະ ກຳມະສິດສ່ວນຕົວ. ກຳມະສິດເອກະຊົນ ມີພາຫະນະການຜະລິດ, ຜະລິດຕະພັນ, ສິນຄ້າ ແລະ ທຶນຮອນໃນການດຳເນີນທຸລະກິດ ຂອງຫົວໜ່ວຍເສດຖະກິດ ທີ່ເປັນກຳມະສິດສ່ວນບຸກຄົນຂອງເຈົ້າຂອງວິສາຫະກິດ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນ ກ່ຽວກັບເຈົ້າກຳ ແລະ ວັດຖຸກຳ ຂອງກຳມະສິດເອກະຊົນ.
ຕົວຢ່າງ	**ກ** ເຮັດບໍລິສັດ ຜະລິດນ້ຳດື່ມບໍລິສຸດ ໂດຍໄດ້ມີການຈົດທະບຽນວິສາຫະກິດ ແລະ ດຳເນີນທຸລະກິດຖືກຕ້ອງຕາມກົດໝາຍ. ໃນການດຳເນີນທຸລະກິດຂອງ **ກ** ມີຊັບສິນລວມມີ ໂຮງງານຜະລິດນ້ຳດື່ມບໍລິສຸດ 1 ຫຼັງ, ມີລົດຂົນສົ່ງ 1 ຄັນ, ແລະ ເຄື່ອງອຸປະກອນຮັບໃຊ້ຂອງບໍລິສັດຈຳນວນໜຶ່ງ ຊຶ່ງທັງໝົດນັ້ນຖືໄດ້ວ່າ ແມ່ນກຳມະສິດເອກະຊົນ.

ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 16 ຂອງກົດໝາຍວ່າດ້ວຍກຳມະສິດ ປີ 1990 ໂດຍເພີ່ມຄຳວ່າ: ກຳມະສິດສ່ວນຕົວ ເຂົ້າໃນກຳມະສິດເອກະຊົນ ເພື່ອ ໃຫ້ສອດຄ່ອງກັບສະພາບຄວາມເປັນຈິງປະເທດເຮົາ.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງຂອງປະເທດອື່ນ	ມາດຕາ 205 ຂອງປະມວນກົດໝາຍແພ່ງ ຫວຽດນາມ.
ມາດຕາອ້າງອີງ	ມາດຕາ 261 ຂໍ້ 4 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 275 ສິດ ແລະ ພັນທະຂອງຫົວໜ່ວຍເສດຖະກິດເອກະຊົນ

ຫົວໜ່ວຍເສດຖະກິດເອກະຊົນ ມີ ສິດດຳເນີນທຸລະກິດ ເປັນຕົ້ນ ການຜະລິດ, ການກໍ່ສ້າງ, ການ ຂົນ ສົ່ງ, ການຄ້າ, ການບໍລິການ ແລະ ເຄື່ອນໄຫວເຮັດສັນຍາຕ່າງໆ, ນຳໃຊ້ເງິນຕາ ເພື່ອສັ່ງຊື້ວັດຖຸດິບ, ວັດຖຸປະ ກອນ ແລະ ອື່ນໆຈາກຕ່າງປະເທດ, ຈຳໜ່າຍຜະລິດຕະພັນຂອງຕົນຢ່າງເສລີຖືກກົດໝາຍ, ຮ່ວມມືທຸລະກິດຢູ່ ພາຍໃນ ແລະ ຕ່າງປະເທດ.

ຫົວໜ່ວຍເສດຖະກິດດັ່ງກ່າວ ຕ້ອງດຳເນີນທຸລະກິດ ຕາມຂອບເຂດທະບຽນວິສາຫະກິດຂອງ ຕົນ, ປະຕິບັດຕາມກົດໝາຍ, ນະ�โยบายເສດຖະກິດ ແລະ ນະ�โยบายອື່ນ ຂອງລັດຢ່າງເຂັ້ມງວດ, ມີພັນ ທະເສຍພາສີ, ອາກອນ ໃຫ້ລັດຢ່າງຄົບຖ້ວນ ແລະ ຖືບັນຊີໃຫ້ຖືກຕ້ອງຕາມກົດໝາຍວ່າດ້ວຍການບັນຊີ.

ຫົວໜ່ວຍເສດຖະກິດເອກະຊົນເປັນຜູ້ຄຸ້ມຄອງ ແລະ ແກ້ໄຂບັນຫາທຸລະກິດດ້ວຍຕົນເອງ, ຮັບ ຜິດຊອບຕໍ່ລາຍຮັບ, ລາຍຈ່າຍ, ກຳໄລ ຫຼື ຫຼຸບທຶນຂອງຕົນ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນ ກ່ຽວກັບສິດ ແລະ ພັນທະ ຂອງຫົວໜ່ວຍເສດຖະກິດ ເອກະຊົນ ຊຶ່ງເປັນໜຶ່ງ ໃນເຈົ້າກຳ ຂອງກຳມະສິດເອກະຊົນ.
ຕົວຢ່າງ	**ກ** ໄດ້ສ້າງຕັ້ງບໍລິສັດຮັບເໝົາກໍ່ສ້າງ ໂດຍມີຈຸດປະສົງເພື່ອດຳເນີນທຸລະກິດການ ຮັບເໝົາກໍ່ສ້າງ, ຫຼັງຈາກນັ້ນບໍລິສັດ **ກ** ໄດ້ເຄື່ອນໄຫວທຸລະກິດ ໂດຍການເຊັນ ສັນຍາຮັບເໝົາກໍ່ສ້າງນຳ **ຂ** ແລະ ເຮັດສັນຍາສັ່ງຊື້ອຸປະກອນກໍ່ສ້າງຈາກຕ່າງປະ ເທດ. ນອກຈາກທີ່ ບໍລິສັດ **ກ** ໄດ້ເຄື່ອນໄຫວດຳເນີນທຸລະກິດຕາມຈຸດປະສົງ ຂອງບໍລິສັດແລ້ວ ບໍລິສັດ **ກ** ຍັງໄດ້ເສຍພາສີ-ອາກອນໃຫ້ຄົບຖ້ວນ ແລະ ທັນ ເວລາໃຫ້ແກ່ລັດ, ໃນການບໍລິຫານລາຍຮັບ, ລາຍຈ່າຍ ລວມທັງຜົນກຳໄລ ຫຼື ການຫຼຸບທຶນທີ່ເກີດຂຶ້ນແມ່ນ **ກ** ເປັນຜູ້ຮັບຜິດຊອບເອງ .
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 17 ກົດໝາຍວ່າດ້ວຍກຳມະສິດ ປີ 1990 ໂດຍປັບປຸງສັບພາສາຊັດເຈນຂຶ້ນ.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 249, 250, 269 ແລະ 273 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 276 ມາດຕະການຕໍ່ຫົວໜ່ວຍເສດຖະກິດເອກະຊົນ

ໃນກໍລະນີທີ່ຫົວໜ່ວຍເສດຖະກິດເອກະຊົນ ຫາກໄດ້ດຳເນີນທຸລະກິດ ນອກວັດຖຸປະສົງທີ່ໄດ້ກຳ ນົດໄວ້ໃນກົດລະບຽບຂອງຕົນ ຫຼື ໄດ້ລະເມີດກົດໝາຍ ເຊັ່ນ ບໍ່ຖືບັນຊີຕາມກົດໝາຍ, ບໍ່ເສຍຄ່າທຳນຽມຕາມ ກຳນົດເວລາ, ປອມແປງ ຫຼື ມອບໃບທະບຽນວິສາຫະກິດໃຫ້ບຸກຄົນອື່ນຢືມ ຫຼື ເຊົ່າແລ້ວ ເຈົ້າຂອງຫົວໜ່ວຍ ເສດຖະກິດນັ້ນ ຕ້ອງຖືກປະຕິບັດມາດຕະການ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍທີ່ກ່ຽວຂ້ອງ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນຫົວໜ່ວຍເສດຖະກິດເອກະຊົນ ເຄື່ອນໄຫວໃຫ້ຖືກຕ້ອງຕາມລະບຽບການ ໂດຍການເຮັດໃຫ້ເຫັນວ່າ ຖ້າຫົວໜ່ວຍເສດຖະກິດເອກະຊົນໃດຫາກໄດ້ດຳເນີນການນອກວັດຖຸປະສົງ ຫຼື ໄດ້ລະເມີດລະບຽບການ, ກໍຈະຖືກປະຕິບັດມາດຕະການ ທີ່ໄດ້ກຳນົດໄວ້ໃນກົດໝາຍ.
ຕົວຢ່າງ	ບໍລິສັດ **ກ** ຂໍຂຶ້ນທະບຽນວິສາຫະກິດ ເພື່ອນຳເຂົ້າສິນຄ້າປະເພດລິດຍົນທຸກຊະນິດ, ຕໍ່ມາ ບໍລິສັດ **ກ** ໄດ້ມາເຮັດສັນຍາຮັບເກັບຊື້ເຄື່ອງປ່າຂອງດົງ ເປັນສິນຄ້າສົ່ງອອກ, ໂດຍບໍ່ໄດ້ຂຶ້ນທະບຽນວິສາຫະກິດ, ກໍລະນີນີ້ ບໍລິສັດ **ກ** ຈະຖືກປະຕິບັດຕາມກົດໝາຍເຊັ່ນ: ອາດຈະຖືກຖອນ ຫຼື ລົບລ້າງທະບຽນວິສາຫະກິດ, ຖືກປັບໃໝ ແລະ ອາດຈະຖືກໂຈະທະບຽນວິສາຫະກິດໄວ້ຊົ່ວຄາວ ຕາມກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 19 ກົດໝາຍວ່າດ້ວຍກຳມະສິດ ປີ 1990 ໂດຍປັບປຸງສັບພາສາໃຫ້ຊັດເຈນຂຶ້ນ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 277 ກຳມະສິດສ່ວນຕົວ

ກຳມະສິດສ່ວນຕົວ ມີເຄື່ອງໃຊ້ສອຍ, ສິ່ງຂອງຊົມໃຊ້ສ່ວນຕົວ, ສິ່ງຂອງອຳນວຍຄວາມສະດວກ, ເຮືອນຢູ່, ເຄື່ອງເຮືອນ, ສັດລ້ຽງ ແລະ ລາຍໄດ້ຕ່າງໆ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນ ກ່ຽວກັບກຳມະສິດ ທີ່ບຸກຄົນເປັນເຈົ້າກຳ ແລະ ວັດຖຸກຳ ຊຶ່ງນີ້ກໍເປັນໜຶ່ງໃນເຈົ້າກຳ ຂອງກຳມະສິດ ເອກະຊົນ.
ຕົວຢ່າງ	**1. ກ** ມີລົດ 1 ຄັນ; ງົວ 10 ໂຕ, ສາຍຄໍຄຳ 2 ເສັ້ນ ເປັນກຳມະສິດຕົນເອງ. **2. ກ** ເປັນຄົນທີ່ມັກຫຼິ້ນກີລາເທນນິດ ແລະ ໄດ້ໄປແຂ່ງຂັນລະດັບປະເທດ ສາມາດຍາດໄດ້ທີ 1 ດັ່ງນັ້ນ, ຈຶ່ງໄດ້ຮັບຫຼຽນຄຳ, ຂັນແຊ້ມປ່ຽນ ແລະ ໄດ້ຮັບການສະໜັບສະໜູນ ຈາກພາກສ່ວນຕ່າງໆ ເປັນປະເພດເຄື່ອງຫຼິ້ນກີລາເທນນິດ ຈຳນວນໜຶ່ງ ຊັບສິ່ງຂອງເຫຼົ່ານີ້ ເປັນກຳມະສິດສ່ວນຕົວຂອງ **ກ.**
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 20 ກົດໝາຍວ່າດ້ວຍກຳມະສິດ ປີ 1990 ໂດຍປັບປຸງສັບພາສາໃຫ້ຊັດເຈນຂຶ້ນ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 274 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ປະມວນກົດໝາຍແພ່ງ ໄດ້ຮຽບຮຽງຄືນຈາກ 5 ຮູບການ ຂອງກຳມະສິດ ມາເປັນ 4 ຮູບການກຳມະສິດ. ໂດຍໄດ້ຈັດເອົາ [ກຳມະສິດສ່ວນຕົວ] ເຂົ້າມາ ຢູ່ໃນ [ກຳມະສິດເອກະຊົນ].

ມາດຕາ 278 ເນື້ອໃນຂອງກຳມະສິດສ່ວນຕົວ

ເຈົ້າກຳມະສິດ ມີສິດຄອບຄອງ, ນຳໃຊ້, ໄດ້ຮັບໝາກຜົນ ແລະ ຊື້ຂາດ ກ່ຽວກັບຊັບສິ່ງຂອງ ແລະ ລາຍໄດ້ຂອງຕົນຕາມຄວາມຕ້ອງການ ແຕ່ຈະນຳໃຊ້ຊັບສິ່ງຂອງ ຂອງຕົນໄປທຳລາຍຜົນປະໂຫຍດທີ່ ຖືກຕ້ອງຕາມກົດໝາຍຂອງ ລັດ, ລວມໝູ່, ການຈັດຕັ້ງ ແລະ ຂອງບຸກຄົນອື່ນນັ້ນແມ່ນບໍ່ໄດ້.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນ ເນື້ອໃນຂອງກຳມະສິດສ່ວນຕົວ.
ຕົວຢ່າງ	**ກ** ເປັນເຈົ້າຂອງລິດຄັນໜຶ່ງ ຊຶ່ງ **ກ** ມີສິດປົກປັກຮັກສາ, ມີສິດນຳໃຊ້ລິດເພື່ອໃຫ້ເກີດປະໂຫຍດຕໍ່ຕົນເອງ ຫຼື **ກ** ສາມາດເອົາລິດຄັນດັ່ງກ່າວ ໄປເຮັດສັນຍາ ເຊົ່າ,ຈຳນຳ,ຈຳນອງ ຫຼື ຂາຍໃຫ້ຜູ້ອື່ນກໍໄດ້.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 21 ກົດໝາຍວ່າດ້ວຍກຳມະສິດ ປີ 1990 ໂດຍເພີ່ມຄຳວ່າ: ການຈັດຕັ້ງ ເຂົ້າໃສ່ໃນມາດຕາດັ່ງກ່າວ ເພື່ອໃຫ້ມີຄວາມຮັດກຸມເຂົ້າຕື້ມ ພ້ອມປັບປຸງສັບພາສາໃຫ້ຊັດເຈນຂຶ້ນ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 249 ແລະ 250 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 279 ກຳມະສິດສ່ວນຕົວຂອງສະມາຊິກຄອບຄົວສະຫະກອນ ຫຼື ອົງການຈັດຕັ້ງລວມໝູ່ອື່ນ

ກຳມະສິດສ່ວນຕົວຂອງສະມາຊິກຄອບຄົວສະຫະກອນ ຫຼື ອົງການຈັດຕັ້ງລວມໝູ່ອື່ນ ແມ່ນລາຍໄດ້ສ່ວນຕົວຈາກການອອກແຮງງານຂອງສະມາຊິກຄອບຄົວສະຫະກອນ ແລະ ຊັບ ທີ່ສະມາຊິກນັ້ນຫາມາໄດ້ດ້ວຍຕົນເອງ ຫຼື ໄດ້ຮັບຕາມການສືບທອດມູນມໍຣະດົກ ຫຼື ຕາມການມອບ ຊຶ່ງບໍ່ໄດ້ມອບເຂົ້າເປັນກຳມະສິດຂອງສະຫະກອນ ຫຼື ອົງການຈັດຕັ້ງລວມໝູ່ອື່ນນັ້ນ.

ຊັບ ທີ່ເປັນກຳມະສິດສະເພາະຂອງສະຫະກອນ ຫຼື ອົງການຈັດຕັ້ງລວມໝູ່ອື່ນ ບໍ່ອາດຈະເອົາມາເປັນກຳມະສິດສ່ວນຕົວ ຂອງສະມາຊິກຄອບຄົວສະຫະກອນ ຫຼື ອົງການຈັດຕັ້ງລວມໝູ່ອື່ນໄດ້.

ຈຸດປະສົງ	ເພື່ອກຳນົດກ່ຽວກັບກຳມະສິດສ່ວນຕົວ ຂອງສະມາຊິກຄອບຄົວສະຫະກອນ ຫຼື ອົງການຈັດຕັ້ງລວມໝູ່ອື່ນ ໃຫ້ມີກຳມະສິດຂອງຕົນເອງຢ່າງຖືກຕ້ອງ.
ຕົວຢ່າງ	**1. ກ** ແລະ ຄອບຄົວ ເປັນສະມາຊິກຂອງກຸ່ມຈັກສານ ຂອງບ້ານ ແຕ່ໃນເວລາຫວ່າງ **ກ** ໄດ້ຈັກສານເພີ່ມດ້ວຍວັດສະດຸຂອງຕົນເອງ ແລະ ນຳໄປຂາຍ, ເງິນທີ່ໄດ້ມາ ກໍເປັນລາຍໄດ້ຂອງຜູ້ກ່ຽວ. **2. ກ** ເປັນສະມາຊິກຂອງກຸ່ມຈັກສານ ໃນຊື່ວໂມງເຮັດວຽກຂອງກຸ່ມ **ກ** ໄດ້ຈັກສານກະຕ່າຫວາຍຈຳນວນໜຶ່ງ ໂດຍໄດ້ນຳໃຊ້ວັດສະດຸ ຫຼື ວັດຖຸດິບຂອງກຸ່ມເມື່ອຜະລິດເປັນສິນຄ້າໃຫ້ແກ່ຕົນເອງ ໃນກໍລະນີນີ້ຖືວ່າສິນຄ້າທີ່ຜະລິດໄດ້ມານັ້ນເປັນກຳມະສິດຂອງລວມໝູ່ ຫຼື ຂອງສະຫະກອນ **ກ** ບໍ່ອາດຈະເອົາມາເປັນກຳມະສິດຂອງ **ກ** ໄດ້.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 24 ກົດໝາຍວ່າດ້ວຍກຳມະສິດ ປີ 1990 ໂດຍປັບປຸງສັບພາສາໃຫ້ຊັດເຈນຂຶ້ນ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ໝວດທີ 5
ກຳມະສິດຮ່ວມ

ມາດຕາ 280 ກຳມະສິດຮ່ວມ

ກຳມະສິດຮ່ວມ ແມ່ນ ກຳມະສິດກ່ຽວກັບຊັບສິ່ງຂອງທີ່ມີເຈົ້າກຳມະສິດແຕ່ ສອງຄົນຂຶ້ນໄປ. ກຳມະສິດຮ່ວມ ໄດ້ມາດ້ວຍການຕົກລົງກັນລະຫວ່າງເຈົ້າກຳມະສິດ ຫຼື ຕາມທີ່ກົດໝາຍໄດ້ກຳນົດໄວ້.

ກຳມະສິດຮ່ວມ ປະກອບດ້ວຍ:

1. ກຳມະສິດຮ່ວມເປັນ ສ່ວນ, ພູດ ຫຼື ເປັນຮຸ້ນ;
2. ກຳມະສິດຮ່ວມ ບໍ່ເປັນສ່ວນ, ພູດ ຫຼື ບໍ່ເປັນຮຸ້ນ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນກ່ຽວກັບ ຄວາມໝາຍ, ເງື່ອນໄຂທີ່ພາໃຫ້ເກີດເປັນກຳມະສິດຮ່ວມ ລວມທັງປະເພດຂອງກຳມະສິດຮ່ວມ.
ຕົວຢ່າງ	**1. ກຳມະສິດຮ່ວມເປັນ ສ່ວນ, ພູດ ຫຼື ເປັນຮຸ້ນ.** **ກ, ຂ, ຄ** ແລະ **ງ** ໄດ້ຕົກລົງອອກເງິນກັນ ເພື່ອຊື້ລົດໄຖນາຄັນໜຶ່ງ ໃນລາຄາ 200,000,000 ກີບ,ໃນນັ້ນ **ກ** ອອກເງິນ 40,000,000 ກີບ, **ຂ** ອອກເງິນ 60,000,000 ກີບ, **ຄ** ອອກເງິນ 50,000,000 ກີບ ແລະ **ງ** ອອກເງິນ 50,000,000 ກີບ, ຖືວ່າພວກກ່ຽວມີກຳມະສິດຮ່ວມ ໂດຍແຕ່ລະຄົນແມ່ນ ສາມາດແບ່ງເປັນສ່ວນ, ພູດ ຫຼື ເປັນຮຸ້ນໄດ້ຕາມການອອກເງິນຕົວຈິງ. **2. ກຳມະສິດຮ່ວມ ບໍ່ເປັນສ່ວນ, ພູດ ຫຼື ບໍ່ເປັນຮຸ້ນ.** **ກ** ແລະ **ຂ** ໄດ້ຮັບມູນມໍຣະດົກ ເປັນເຮືອນ 1 ຫຼັງ ຈາກພໍ່ ຊຶ່ງ **ກ** ແລະ **ຂ** ແມ່ນຍັງບໍ່ທັນໄດ້ມີການຕົກລົງແບ່ງປັນກັນຈຶ່ງຖືວ່າ ເຮືອນ 1 ຫຼັງນັ້ນ ແມ່ນ ເປັນກຳມະສິດຮ່ວມ ທີ່ບໍ່ທັນເປັນພູດຂອງໃຜລາວເທື່ອ ເນື່ອງຈາກວ່າ ບໍ່ທັນ ໄດ້ມີການແບ່ງປັນມູນມໍຣະດົກ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງຈາກ ມາດຕາ 25 ຂອງກົດໝາຍວ່າດ້ວຍກຳມະສິດ ປີ 1990, ຊຶ່ງກຳນົດໃຫ້ຈະແຈ້ງຂຶ້ນຕື່ມອີກ ກ່ຽວກັບລັກສະນະ ແລະ ເນື້ອໃນຂອງ ກຳມະສິດຮ່ວມ ເພື່ອໃຫ້ມີຄວາມເປັນເອກະພາບ ແລະ ສະດວກໃຫ້ແກ່ພາກ ສ່ວນກ່ຽວຂ້ອງໄດ້ແກ້ໄຂຂໍ້ຂັດແຍ່ງຕໍ່ບັນຫາດັ່ງກ່າວ. ນອກຈາກນີ້ ຍັງໄດ້ປັບປຸງ ປ່ຽນຄຳສັບ ຈາກຄຳວ່າ: ກຳມະສິດລວມ ມາເປັນ ກຳມະສິດຮ່ວມ ຍ້ອນວ່າ ຖ້າໃຊ້ກຳມະສິດລວມ ອາດຈະຫຼົງກັບຄຳວ່າ ກຳມະສິດລວມໝູ່ ຊຶ່ງກຳນົດໄວ້ໃນມາດຕາ 268 ຂອງປະມວນກົດໝາຍແພ່ງ ແລະ ຫຼັກການທີ່ກ່ຽວຂ້ອງ ກັບ ເລື່ອງດັ່ງກ່າວ ຊຶ່ງເປັນຄົນລະຄວາມໝາຍກັນ.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງ ຂອງປະເທດອື່ນ	ມາດຕາ 207 ແລະ 208 ຂອງປະມວນກົດໝາຍແພ່ງຫວຽດນາມ; ມາດຕາ 1356 ຂອງປະມວນກົດໝາຍແພ່ງ ແລະ ພານິດໄທ.
ມາດຕາອ້າງອີງ	ມາດຕາ 281-291 ແລະ 325 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 281 ກຳມະສິດຮ່ວມເປັນ ສ່ວນ, ພູດ ຫຼື ເປັນຮຸ້ນ

ກຳມະສິດຮ່ວມເປັນ ສ່ວນ, ພູດ ຫຼື ເປັນຮຸ້ນ ແມ່ນ ກຳມະສິດຮ່ວມ ຊຶ່ງສາມາດກຳນົດ ສ່ວນ, ພູດ ຫຼື ຮຸ້ນ ຂອງແຕ່ລະຄົນ.

ຈຸດປະສົງ	ເພື່ອກຳນົດນິຍາມ ຂອງກຳມະສິດຮ່ວມ ທີ່ໄດ້ກຳນົດເປັນ ສ່ວນ, ເປັນ ພູດ ຫຼື ເປັນຮຸ້ນ.
ຕົວຢ່າງ	**1. ກ** ແລະ **ຂ** ຕົກລົງຊື້ສິດນຳໃຊ້ທີ່ດິນຮ່ວມກັນ ຊຶ່ງໄດ້ຕົກລົງວ່າ **ກ** ມີພູດໃນທີ່ດິນຕອນດັ່ງກ່າວ 2/3 ແລະ **ຂ** ມີພູດ 1/3 ແລະ ການອອກຊື່ໃນໃບຕາດິນດັ່ງກ່າວ ແມ່ນອອກຊື່ທັງສອງຄົນ ຊຶ່ງເປັນກຳມະສິດຮ່ວມ. **2. ກ** ແລະ **ຂ** ຮ່ວມກັນສ້າງຕັ້ງບໍລິສັດ, ໂດຍ **ກ** ຖືຮຸ້ນ 51% ແລະ **ຂ** ຖື 49% ຂອງທຶນຈົດທະບຽນບໍລິສັດທັງໝົດ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ ສ້າງຂຶ້ນໃໝ່ ເພື່ອກຳນົດໃຫ້ເຫັນກ່ຽວກັບເນື້ອໃນ ຂອງກຳມະສິດຮ່ວມ ທີ່ກຳນົດ ເປັນສ່ວນ, ພູດ ຫຼື ເປັນຮຸ້ນ ໃຫ້ຮັດກຸມ, ຈະແจ້ງ ແລະ ຊັດເຈນຂຶ້ນ ເພາະວ່າ ກົດໝາຍວ່າດ້ວຍກຳມະສິດ ປີ 1990 ບໍ່ໄດ້ກຳນົດກ່ຽວກັບເລື່ອງດັ່ງກ່າວໄວ້.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 209 ຂອງປະມວນກົດໝາຍແພ່ງຫວຽດນາມ; ມາດຕາ 1008, 1009 ແລະ 1011 ຂອງປະມວນກົດໝາຍແພ່ງເຢຍລະມັນ; ມາດຕາ 1357 ຂອງປະມວນກົດໝາຍແພ່ງ ແລະ ພານິດໄທ.
ມາດຕາອ້າງອີງ	ມາດຕາ 280 ວັກ 2 ຂໍ້ 1 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 282 ກຳມະສິດຮ່ວມບໍ່ເປັນ ສ່ວນ, ພູດ ຫຼື ບໍ່ເປັນຮຸ້ນ

ກຳມະສິດຮ່ວມບໍ່ເປັນ ສ່ວນ, ພູດ ຫຼື ບໍ່ເປັນຮຸ້ນ ແມ່ນ ກຳມະສິດຮ່ວມ ຕໍ່ຊັບສິ່ງຂອງທີ່ບໍ່ໄດ້ກຳນົດ ສ່ວນ, ພູດ ຫຼື ເປັນຮຸ້ນ, ໃນກໍລະນີນີ້ ໃຫ້ສັນນິຖານວ່າ ແຕ່ລະຄົນ ມີສ່ວນ, ພູດ ຫຼື ຮຸ້ນເທົ່າກັນ.

ກຳມະສິດຮ່ວມບໍ່ເປັນ ສ່ວນ, ພູດ ຫຼື ເປັນຮຸ້ນ ປະກອບດ້ວຍ:

1. ກຳມະສິດຮ່ວມ ທີ່ບໍ່ສາມາດແຍກອອກຈາກກັນໄດ້;
2. ກຳມະສິດຮ່ວມ ທີ່ສາມາດແຍກອອກຈາກກັນໄດ້.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນ ນິຍາມຂອງກຳມະສິດຮ່ວມ ທີ່ບໍ່ໄດ້ກຳນົດເປັນສ່ວນ, ເປັນ ພູດ ຫຼື ເປັນຮຸ້ນ, ແລະ ເພື່ອສ້າງໃຫ້ມີມາດຕາທີ່ນຳໃຊ້ໃນການສັນນິຖານເພື່ອ ກຳນົດສ່ວນ, ພູດ ຫຼື ຮຸ້ນດັ່ງກ່າວ. ນອກນັ້ນ, ກໍເຮັດໃຫ້ມີຜົນທັງຕໍ່ກັບຊັບສິ່ງ ຂອງທີ່ບໍ່ສາມາດ ແຍກໄດ້ນັ້ນ, ແລະ ຊັບສິ່ງຂອງທີ່ ສາມາດແຍກໄດ້.
ຕົວຢ່າງ	**1. ກຳມະສິດຮ່ວມ ທີ່ບໍ່ສາມາດແຍກອອກຈາກກັນໄດ້;** **ກ** ຜູ້ເປັນພໍ່ ໄດ້ມອບທີ່ດິນຕອນໜຶ່ງໃຫ້ລູກ ຄື **ຂ** ແລະ **ຄ** ແຕ່ **ກ** ບໍ່ໄດ້ກຳນົດອັດຕາ ສ່ວນວ່າມອບໃຫ້ຜູ້ລະເທົ່າໃດ. ກໍລະນີນີ້ ຖືວ່າ **ຂ** ແລະ **ຄ** ມີກຳມະສິດຮ່ວມໃນ ຊັບນັ້ນ ແລະ ບໍ່ສາມາດແຍກໄດ້ວ່າ ແຕ່ລະຄົນນັ້ນ ມີອັດຕາສ່ວນເທົ່າໃດ ຊຶ່ງກໍລະນີນີ້ ໃຫ້ສັນນິຖານວ່າ **ຂ** ແລະ **ຄ** ມີກຳມະສິດເທົ່າກັນ.

	2. ກຳມະສິດຮ່ວມ ທີ່ສາມາດແຍກອອກຈາກກັນໄດ້. **ກ, ຂ, ຄ** ແລະ **ງ** ໄດ້ຕົກລົງອອກເງິນກັນ ເພື່ອຊື້ລົດໄຖນາຄັນໜຶ່ງ ໃນລາຄາ 200,000,000 ກີບ,ໃນນັ້ນ **ກ** ອອກເງິນ 40,000,000 ກີບ, **ຂ** ອອກເງິນ 60,000,000 ກີບ, **ຄ** ອອກເງິນ 50,000,000 ກີບ ແລະ **ງ** ອອກເງິນ 50,000,000 ກີບ, ຖືວ່າພວກກ່ຽວມີກຳມະສິດຮ່ວມໂດຍແຕ່ລະຄົນແມ່ນສາມາດແບ່ງເປັນສ່ວນ,ພູດ ຫຼື ເປັນຮຸ້ນໄດ້ຕາມການອອກເງິນຕົວຈິງ ກໍລະນີນີ້ລົດໄຖນາຄັນດັ່ງກ່າວເປັນກຳມະສິດຮ່ວມທີ່ບໍ່ສາມາດແຍກອອກຈາກກັນໄດ້. **3. ກ** ແລະ **ຂ** ໄດ້ຢູ່ກິນນຳກັນ ແລະ ເຮັດທຸລະກິດຮ່ວມກັນມາເປັນເວລາຫຼາຍປີ, ທັງສອງໄດ້ມີຊັບສິນນຳກັນຄື ເງິນຝາກຢູ່ທະນາຄານມີ 100,000,000 ກີບ ແລະ ທີ່ດິນໜຶ່ງຕອນມີເນື້ອທີ່ 1 ເຮັກຕ່າ ແຕ່ທັງສອງບໍ່ໄດ້ຈົດທະບຽນການແຕ່ງດອງ, ດັ່ງນັ້ນ ຊັບສິນທີ່ທັງສອງຫາໄດ້ມານຳກັນນັ້ນ ຖືວ່າເປັນຊັບຮ່ວມລະຫວ່າງ **ກ** ແລະ **ຂ** ໃນກໍລະນີ ຫາກມີຂໍ້ຂັດແຍ່ງທີ່ຈຳເປັນຕ້ອງໄດ້ແຍກກັນຢູ່ນັ້ນທັງສອງກໍສາມາດແບ່ງ ຊັບນັ້ນໄດ້ ຍ້ອນເງິນເປັນຊັບທີ່ສາມາດແຍກອອກຈາກກັນໄດ້, ສ່ວນທີ່ດິນໃນຕົວ ຈິງແລ້ວແມ່ນຈະບໍ່ສາມາດແຍກທີ່ດິນໃຫ້ອອກຈາກກັນໄດ້, ແຕ່ພວກເຮົາກໍສາມາດແຍກສິດນຳໃຊ້ທີ່ດິນອອກເປັນຫຼາຍໆຕອນກໍໄດ້.
ເຫດຜົນໃນການສ້າງ ໃໝ່	ມາດຕານີ້ ສ້າງຂຶ້ນໃໝ່ ເພື່ອກຳນົດໃຫ້ເຫັນ ກ່ຽວກັບເນື້ອໃນຂອງກຳມະສິດຮ່ວມ ທີ່ກຳນົດບໍ່ເປັນສ່ວນ, ພູດ ຫຼື ບໍ່ເປັນຮຸ້ນ ໃຫ້ຮັດກຸມ, ຊັດເຈນຂຶ້ນ ເພາະວ່າກົດໝາຍວ່າດ້ວຍກຳມະສິດ ສະບັບປີ 1990 ບໍ່ໄດ້ກຳນົດກ່ຽວກັບເລື່ອງດັ່ງກ່າວໄວ້. ຄຳວ່າ **ກຳມະສິດຮ່ວມທີ່ບໍ່ສາມາດແຍກອອກຈາກກັນໄດ້** ໝາຍເຖິງ **ກຳມະສິດຮ່ວມຕໍ່ຊັບສິ່ງຂອງບໍ່ສາມາດແຍກໄດ້** ຊຶ່ງກຳນົດໄວ້ໃນວັກທີ 2 ຂອງມາດຕາ 232 ແລະ ການແບ່ງປັນກຳມະສິດຮ່ວມ ໃຫ້ປະຕິບັດຕາມມາດຕາ 290 ວັກ 2 ຂອງປະມວນກົດໝາຍແພ່ງ. ຄຳວ່າ **ກຳມະສິດຮ່ວມທີ່ສາມາດແຍກອອກຈາກກັນໄດ້** ໝາຍເຖິງ **ກຳມະສິດຮ່ວມຕໍ່ຊັບສິ່ງຂອງສາມາດແຍກໄດ້** ຊຶ່ງກຳນົດໄວ້ໃນວັກທີ 1 ຂອງມາດຕາ 232 ແລະ ການແບ່ງປັນກຳມະສິດຮ່ວມໃຫ້ປະຕິບັດຕາມມາດຕາ 290 ວັກ 1 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 210 ຂອງປະມວນກົດໝາຍແພ່ງຫວຽດນາມ; ມາດຕາ 1008, 1009 ແລະ 1011 ຂອງປະມວນກົດໝາຍແພ່ງເຢຍລະມັນ; ມາດຕາ 1357 ຂອງປະມວນກົດໝາຍແພ່ງ ແລະ ພານິດໄທ.
ມາດຕາອ້າງອີງ	ມາດຕາ 280 ວັກ 2 ຂໍ້ 2, 287 ແລະ 290 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼືປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 283 ກຳມະສິດຮ່ວມຂອງຊຸມຊົນ

ກຳມະສິດຮ່ວມຂອງຊຸມຊົນ ແມ່ນ ກຳມະສິດຮ່ວມຕໍ່ຊັບສິ່ງຂອງ ບໍ່ເປັນສ່ວນ, ພູດ ຫຼື ເປັນຮຸ້ນ ເຊັ່ນ ກຳມະສິດຂອງບ້ານ, ກຸ່ມບ້ານ, ກຸ່ມການຜະລິດ ທີ່ຖືກຕ້ອງຕາມກົດໝາຍ.

ກຳມະສິດຮ່ວມຂອງຊຸມຊົນ ໄດ້ມາຕາມປະເພນີ, ໄດ້ມາຈາກການປະກອບສ່ວນຂອງສະມາຊິກ, ການອຸປະຖຳ ຫຼື ການມອບຊັບສິ່ງຂອງ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ແລະ ຈາກແຫຼ່ງອື່ນ ໂດຍສອດຄ່ອງຕາມກົດໝາຍ.

ສະມາຊິກຊຸມຊົນ ມີສິດຄອບຄອງ, ນຳໃຊ້, ໄດ້ຮັບໝາກຜົນ ທີ່ເກີດຈາກກຳມະສິດຮ່ວມ ຕາມປະເພນີ, ຕາມການຕົກລົງກັນ ຫຼື ຕາມກົດໝາຍ.

ສຳລັບການຊື້ຂາດ ຕໍ່ກຳມະສິດລວມນັ້ນ ມອບໃຫ້ຊຸມຊົນເປັນຜູ້ຕົກລົງຮ່ວມກັນ ໂດຍສອດຄ່ອງຕາມ ກົດໝາຍ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນນິຍາມ ຂອງກຳມະສິດຮ່ວມຂອງຊຸມຊົນ, ເງື່ອນໄຂທີ່ພາໃຫ້ມີຜົນ, ການມີສິດຂອງສະມາຊິກ ຕໍ່ກຳມະສິດ ຮ່ວມຂອງຊຸມຊົນ, ລວມທັງໃຫ້ຮູ້ກ່ຽວກັບວິທີການ ໃນການຊື້ຂາດ ຕໍ່ກຳມະສິດຮ່ວມຂອງຊຸມຊົນ.
ຕົວຢ່າງ	**1. ກຳມະສິດຮ່ວມຂອງຊຸມຊົນ:** ບ້ານ **ກ** ໄດ້ມີການປະກອບທຶນ ແລະ ແຮງງານພາຍໃນບ້ານເພື່ອນຳໄປກໍດັນຄູ ຕັນຫ່ວຍນ້ຳເພື່ອເກັບຮັກສານ້ຳ ແລະ ພັນປາທຳມະຊາດ, ນອກນັ້ນ ປະຊາຊົນ ໃນບ້ານນັ້ນກໍຍັງໄດ້ລະດົມທຶນເພື່ອໄປຊື້ປາມາປ່ອຍໃສ່ໜອງດັ່ງກ່າວ ໃຫ້ປະຊາ ຊົນ ພາຍໃນບ້ານໄດ້ຊົມໃຊ້. **2. ສິດຄອບຄອງ, ນຳໃຊ້, ໄດ້ຮັບໝາກຜົນ ທີ່ເກີດຈາກກຳມະສິດ ຮ່ວມຕາມປະເພນີ.** ປະຊາຊົນພາຍໃນບ້ານແຕ່ລະຄອບຄົວ ມີສິດປົກປັກຮັກສາ,ສິດນຳໃຊ້, ໄດ້ຮັບໝາກຜົນຈາກໜອງປາໂດຍປະຊົນແຕ່ລະຄອບຄົວສາມາດຫາປາເອົາມາ ກິນໄດ້ ແຕ່ບໍ່ໃຫ້ຫາເພື່ອມາຂາຍຊຶ່ງເປັນລະບຽບທີ່ປະຊາຊົນເຄີຍປະຕິບັດກັນ ມາ ແລະ ທຸກໆ 5 ປີໃດ ປະຊາຊົນຈະຕ້ອງໄດ້ປ່ອຍນ້ຳໜອງປາອອກເພື່ອນຳປາ ມາຂາຍແລ້ວເອົາເງິນມາເຂົ້າກອງທຶນຂອງບ້ານ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງຂຶ້ນໃໝ່ເພື່ອເຮັດໃຫ້ຄວາມໝາຍ, ສາເຫດຂອງການສ້າງຕັ້ງ, ສິດ ຂອງສະມາຊິກ ແລະ ວິທີການຊື້ຂາດ ກຳມະສິດຮ່ວມຂອງຊຸມຊົນອອກ ໃຫ້ ຊັດເຈນຂຶ້ນຕື່ມ.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງຂອງປະເທດອື່ນ	ມາດຕາ 211 ຂອງປະມວນກົດໝາຍແພ່ງຫວຽດນາມ; ມາດຕາ 263 ແລະ 294 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 284 ສິດຄອບຄອງຂອງເຈົ້າກຳມະສິດຮ່ວມ

ເຈົ້າກຳມະສິດຮ່ວມ ມີສິດຄອບຄອງຊັບສິ່ງຂອງຮ່ວມກັນ ຫຼື ອາດມອບສິດຄອບຄອງໃຫ້ ເຈົ້າກຳມະ ສິດຮ່ວມຜູ້ໃດໜຶ່ງກໍໄດ້ ແຕ່ບໍ່ໃຫ້ຂັດກັບສິດຂອງເຈົ້າກຳມະສິດຮ່ວມຜູ້ອື່ນ.

ຈຸດປະສົງ	ເພື່ອກຳນົດສິດຄອບຄອງ ຂອງເຈົ້າກຳມະສິດຮ່ວມ.
ຕົວຢ່າງ	**ກ, ຂ** ແລະ **ຄ** ມີລົດໄຖນາຄັນໜຶ່ງເປັນກຳມະສິດຮ່ວມຂອງພວກກ່ຽວ ຊຶ່ງໃນ ນັ້ນ ພວກກ່ຽວໄດ້ຕົກລົງມອບໃຫ້ **ກ** ເປັນຜູ້ຮັກສາ ຫຼື ຄອບຄອງ ແຕ່ການ ຄອບຄອງຂອງ **ກ** ນັ້ນບໍ່ໃຫ້ຂັດຕໍ່ສິດ ແລະ ຜົນປະໂຫຍດຂອງ **ຂ** ແລະ **ຄ.**
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 25 ວັກ 2 ກົດໝາຍວ່າດ້ວຍກຳມະສິດ ສະບັບປີ 1990 ເພື່ອກຳນົດກ່ຽວກັບ ສິດຄອບຄອງ ຂອງເຈົ້າກຳມະສິດຮ່ວມ ໃຫ້ຮັດກຸມ, ແລະ ຊັດເຈນຂຶ້ນກວ່າເກົ່າ.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງຂອງປະເທດອື່ນ	ມາດຕາ 743 ຂອງປະມວນກົດໝາຍແພ່ງເຢຍລະມັນ.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 285 ສິດນຳໃຊ້ຂອງເຈົ້າກຳມະສິດຮ່ວມ

ເຈົ້າກຳມະສິດຮ່ວມຜູ້ໃດໜຶ່ງ ມີສິດນຳໃຊ້ຊັບສິ່ງຂອງຮ່ວມກັນຕາມ ສ່ວນ, ພູດ ຫຼື ເປັນຮຸ້ນ ຂອງຕົນ ໂດຍບໍ່ໃຫ້ຂັດກັບສິດຂອງເຈົ້າກຳມະສິດຮ່ວມຜູ້ອື່ນ.

ຈຸດປະສົງ	ເພື່ອກຳນົດ ສິດນຳໃຊ້ ຂອງເຈົ້າກຳມະສິດຮ່ວມ.
ຕົວຢ່າງ	**ກ** ແລະ **ຂ** ມີລົດໜຶ່ງຄັນ ທີ່ເປັນກຳມະສິດຮ່ວມຂອງພວກກ່ຽວ, **ກ** ແລະ **ຂ** ໄດ້ຕົກລົງປ່ຽນກັນ ນຳໃຊ້ຜູ້ລະໜຶ່ງອາທິດ, ໝາຍຄວາມວ່າ **ກ** ບໍ່ສາມາດນຳໃຊ້ລົດໄດ້ຫຼາຍກວ່າ **ຂ** ເວັ້ນເສຍແຕ່ສອງຝ່າຍ ຈະໄດ້ຕົກລົງກັນເປັນຢ່າງອື່ນ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 25 ວັກ 2 ກົດໝາຍວ່າດ້ວຍກຳມະສິດ ປີ 1990 ເພື່ອກຳນົດກ່ຽວກັບສິດ ການນຳໃຊ້ຂອງເຈົ້າກຳມະສິດຮ່ວມໃຫ້ຮັດກຸມ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 217 ຂອງປະມວນກົດໝາຍແພ່ງຫວຽດນາມ; ມາດຕາ 743 ວັກ 2 ຂອງປະມວນກົດໝາຍເຢຍລະມັນ; ມາດຕາ 249 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 286 ສິດໄດ້ຮັບໝາກຜົນຂອງເຈົ້າກຳມະສິດຮ່ວມ

ເຈົ້າກຳມະສິດຮ່ວມ ມີສິດໄດ້ຮັບໝາກຜົນ ທີ່ເກີດຈາກສິ່ງຂອງ ຫຼື ການນຳໃຊ້ຊັບສິ່ງຂອງ.

ເຈົ້າກຳມະສິດຮ່ວມແຕ່ລະຄົນ ມີສິດໄດ້ຮັບໝາກຜົນຕາມ ສ່ວນ, ພູດ ຫຼື ເປັນຮຸ້ນ ທີ່ມີໃນຊັບສິ່ງ ຂອງນັ້ນ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນວ່າ ເຈົ້າກຳມະສິດຮ່ວມ ມີສິດໄດ້ຮັບໝາກ ຜົນລວມທັງເຮັດໃຫ້ຮູ້ເນື້ອໃນຂອງສິດໄດ້ຮັບໝາກຜົນ (ວິທີແບ່ງປັນໝາກຜົນ).
ຕົວຢ່າງ	**1. ເຈົ້າກຳມະສິດຮ່ວມ ມີສິດໄດ້ຮັບໝາກຜົນ ທີ່ເກີດຈາກສິ່ງຂອງ ຫຼື ການນຳໃຊ້ຊັບສິ່ງຂອງ.** **ກ** ແລະ **ຂ** ໄດ້ຕົກລົງອອກເງິນກັນ ເພື່ອນຳໄປຊື້ທີ່ດິນໜຶ່ງຕອນ ມີເນື້ອທີ 1 ເຮັກຕາ ໃນລາຄາ 200,000,000 ກີບ, ໃນນັ້ນ **ກ** ແລະ **ຂ** ທັງສອງໄດ້ອອກເງິນ ຄົນລະເຄິ່ງຕໍ່ມາ **ກ** ແລະ **ຂ** ໄດ້ເອົາທີ່ດິນຕອນດັ່ງກ່າວ ໄປເຮັດສັນຍາເຊົ່າກັບ **ຄ** ໃນລາຄາປີລະ 30,000,000 ກີບຕໍ່ປີ, ດັ່ງນັ້ນ **ກ** ແລະ **ຂ** ຈະໄດ້ຮັບໝາກຜົນ ຈາກການເອົາທີ່ດິນ ນັ້ນໃຫ້ **ຄ** ເຊົ່າ. **2. ເຈົ້າກຳມະສິດຮ່ວມແຕ່ລະຄົນ ມີສິດໄດ້ຮັບໝາກຜົນຕາມ ສ່ວນ, ພູດ ຫຼື ເປັນຮຸ້ນ.** **ກ, ຂ** ແລະ **ຄ** ໄດ້ຕົກລົງອອກເງິນກັນ ເພື່ອນຳໄປຊື້ທີ່ດິນໜຶ່ງຕອນ ມີເນື້ອທີ 2 ເຮັກຕາໃນລາຄາ 450,000,000 ກີບ, ໃນນັ້ນ **ກ** ໄດ້ອອກເງິນ 200,000,000 ກີບ, **ຂ** ໄດ້ອອກເງິນ 150,000,000 ກີບ ແລະ **ຄ** ອອກເງິນ 100,000,000 ກີບ ຕໍ່ມາພວກກ່ຽວໄດ້ເອົາທີ່ດິນຕອນດັ່ງກ່າວ ໄປເຮັດສັນຍາເຊົ່າໃຫ້ **ງ** ໃນລາຄາ ປີລະ 60,000,000 ລ້ານກີບຕໍ່ປີ, ດັ່ງນັ້ນ **ກ, ຂ** ແລະ **ຄ** ຈະໄດ້ຮັບການແບ່ງປັນ ເງິນທີ່ໄດ້ຈາກການ ເຊົ່າທີ່ດິນນັ້ນ ຕາມສ່ວນ, ພູດ ຫຼື ເປັນຮຸ້ນ ໂດຍອີງໃສ່ ຈຳນວນເງິນຕົວຈິງ ທີ່ແຕ່ຄົນອອກນັ້ນ ຕາມການຕົກລົງການ.

ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາດຈາກ ມາດຕາ 25 ວັກ 2 ກົດໝາຍວ່າດ້ວຍກຳມະສິດ ສະບັບປີ 1990 ເພື່ອກຳນົດກ່ຽວກັບ ສິດຮັບໝາກຜົນຂອງເຈົ້າກຳມະສິດຮ່ວມ ໃຫ້ຮັດກຸມ.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງ ຂອງປະເທດອື່ນ	ມາດຕາ 217 ຂອງປະມວນກົດໝາຍແພ່ງຫວຽດນາມ.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 287 ສິດຊື້ຂາດກຳມະສິດຮ່ວມ

ເຈົ້າກຳມະສິດຮ່ວມ ມີສິດຊື້ຂາດກ່ຽວກັບກຳມະສິດຮ່ວມຕາມ ສ່ວນ, ພູດ ຫຼື ເປັນຮຸ້ນ ຂອງຕົນ ແຕ່ການຊື້ຂາດໃຫ້ບຸກຄົນພາຍນອກນັ້ນ ຕ້ອງໄດ້ຮັບການເຫັນດີຈາກເຈົ້າກຳມະສິດຮ່ວມຜູ້ອື່ນ.

ຖ້າເຈົ້າກຳມະສິດຮ່ວມ ຫາກຕ້ອງການຂາຍກຳມະສິດຮ່ວມ ທີ່ເປັນ ສ່ວນ, ພູດ ຫຼື ເປັນຮຸ້ນ ຂອງຕົນນັ້ນ ຕ້ອງໃຫ້ເຈົ້າກຳມະສິດຮ່ວມຜູ້ອື່ນ ມີບຸລິມະສິດຊື້ກ່ອນ ໂດຍແຈ້ງໃຫ້ເຈົ້າກຳມະສິດຮ່ວມຜູ້ອື່ນ ນັ້ນ ພາຍໃນເວລາ ສາມເດືອນ ກ່ຽວກັບອະສັງຫະລິມະຊັບ ຫຼື ໜຶ່ງເດືອນ ກ່ຽວກັບສັງຫະລິມະຊັບ. ໃນກໍ ລະນີທີ່ບໍ່ມີເຈົ້າກຳມະສິດຮ່ວມຜູ້ໃດ ຊື້ຊັບສິ່ງຂອງນັ້ນແລ້ວ ກໍສາມາດຂາຍຊັບຮ່ວມ ທີ່ເປັນ ສ່ວນ, ພູດ ຫຼື ເປັນຮຸ້ນ ຂອງຕົນນັ້ນ ໃຫ້ບຸກຄົນອື່ນໄດ້.

ໃນກໍລະນີຫາກໄດ້ລະເມີດຕາມທີ່ກຳນົດໄວ້ໃນວັກທີສອງ ຂອງມາດຕານີ້ ເຈົ້າກຳມະສິດຮ່ວມ ຜູ້ອື່ນ ມີສິດຮ້ອງຟ້ອງຕໍ່ສານ ເພື່ອໂອນຊັບສິ່ງຂອງຮ່ວມທີ່ເປັນ ສ່ວນ, ພູດ ຫຼື ເປັນຮຸ້ນຂອງຜູ້ກ່ຽວນັ້ນຄືນ ພາຍໃນເວລາ ສາມເດືອນ ນັບແຕ່ວັນໄດ້ຮູ້ວ່າມີການລະເມີດ. ຖ້າຫາກມີຄວາມເສຍຫາຍ ຜູ້ລະເມີດຕ້ອງ ໄດ້ໃຊ້ແທນຄ່າເສຍຫາຍໃຫ້ເຈົ້າກຳມະສິດຮ່ວມອື່ນ ທີ່ໄດ້ຮັບຄວາມເສຍຫາຍນັ້ນ.

ໃນກໍລະນີເຈົ້າກຳມະສິດຮ່ວມໃດໜຶ່ງ ໄດ້ສະລະຊັບສິ່ງຂອງຮ່ວມທີ່ເປັນ ສ່ວນ, ພູດ ຫຼື ເປັນຮຸ້ນ ຂອງຕົນ ຫຼື ໄດ້ເສຍຊີວິດ ໂດຍບໍ່ມີຜູ້ສືບທອດ, ຊັບສິ່ງຂອງທີ່ເປັນ ສ່ວນ, ພູດ ຫຼື ເປັນຮຸ້ນດັ່ງກ່າວ ກໍຈະຕົກ ເປັນກຳມະສິດຮ່ວມຂອງຜູ້ເປັນເຈົ້າກຳມະສິດຮ່ວມຜູ້ອື່ນ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນຫຼັກການ ກ່ຽວກັບການຊື້ຂາດຊັບຮ່ວມແບບມີສ່ວນ, ພູດ ຫຼື ເປັນ ຮຸ້ນຂອງເຈົ້າກຳມະສິດຮ່ວມ.
ຕົວຢ່າງ	**1. ກ, ຂ** ແລະ **ຄ** ໄດ້ຊື້ທີ່ດິນຮ່ວມກັນ ມີເນື້ອທີ່ 2 ເຮັກຕາໃນລາຄາ 400,000,000 ກີບ ໂດຍ **ກ** ອອກເງິນ 200,000,000 ກີບ ແລະ **ຂ** ແລະ **ຄ** ອອກເງິນຄົນລະເຄິ່ງຄືຜູ້ລະ 100,000,000 ກີບ. ໃນກໍລະນີທີ່ **ກ** ຢາກ ຂາຍສິດນຳໃຊ້ທີ່ດິນ ທີ່ເປັນພູດຂອງຕົນໃຫ້ **ງ** ທີ່ບໍ່ແມ່ນເຈົ້າກຳມະສິດຮ່ວມນັ້ນ **ຂ** ຕ້ອງໄດ້ຮັບການເຫັນດີຈາກ **ຂ** ແລະ **ຄ** ທີ່ເປັນເຈົ້າກຳມະສິດຮ່ວມສາກ່ອນ. **2.** ໃນກໍລະນີທີ່ **ກ** ຢາກຂາຍສິດນຳໃຊ້ທີ່ດິນທີ່ເປັນພູດຂອງຕົນໃຫ້ **ງ** ທີ່ບໍ່ແມ່ນ ເຈົ້າກຳມະສິດຮ່ວມນັ້ນ **ກ** ຈະຕ້ອງແຈ້ງໃຫ້ ເຈົ້າກຳມະສິດຮ່ວມ **ຂ** ແລະ **ຄ** ຊາບກ່ອນລ່ວງໜ້າ ສາມເດືອນ, **ຂ** ແລະ **ຄ** ຈະມີບຸລິມະສິດຊື້ກ່ອນ **ງ** ແຕ່ຖ້າ ໝົດກຳນົດເວລາດັ່ງກ່າວແລ້ວ **ກ** ກໍສາມາດຂາຍສິດນຳໃຊ້ທີ່ດິນທີ່ເປັນພູດຂອງ ຕົນໃຫ້ **ງ** ໄດ້. **3.** ໃນກໍລະນີ **ກ** ຫາກຂາຍສິດນຳໃຊ້ທີ່ດິນທີ່ເປັນສ່ວນຂອງຕົນນັ້ນໃຫ້ **ງ** ໂດຍ ບໍ່ໄດ້ແຈ້ງໃຫ້ **ຂ** ແລະ **ຄ** ຮູ້ກ່ອນນັ້ນ, **ຂ** ແລະ **ຄ** ມີສິດຮ້ອງຂໍຕໍ່ສານ ເພື່ອໂອນ ກຳມະສິດທີ່ດິນດັ່ງກ່າວ ມາເປັນກຳມະສິດຮ່ວມຄືນ. ຄ່າເສຍຫາຍທີ່ເກີດຂຶ້ນນັ້ນ ເຊັ່ນ: ຄ່າຈ້າງທະນາຍຄວາມ, ຄ່າປ່ວຍການຊັບ (ຖ້າມີ) **ກ** ຕ້ອງຮັບຜິດຊອບ.

	4. ຖ້າວ່າ **ກ** ຫາກສະລະຊັບຮ່ວມ ທີ່ເປັນສ່ວນ, ພູດ ຫຼື ເປັນຮຸ້ນ ຂອງຕົນ ຫຼື ໄດ້ເສຍຊີວິດ ໂດຍບໍ່ມີຜູ້ສືບທອດ, ຊັບສິ່ງຂອງທີ່ເປັນສ່ວນ, ພູດ ຫຼື ເປັນຮຸ້ນດັ່ງກ່າວກໍຈະຕົກເປັນກຳມະສິດຮ່ວມຂອງ **ຂ** ແລະ **ຄ.**
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາດຈາກ ມາດຕາ 25 ວັກ 2 ກົດໝາຍວ່າດ້ວຍກຳມະສິດ ປີ 1990 ເພື່ອກຳນົດກ່ຽວກັບ ສິດຊື້ຂາດ ຂອງເຈົ້າກຳມະສິດຮ່ວມໃຫ້ຮັດກຸມ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 218 ຂອງປະມວນກົດໝາຍຫວຽດນາມ; ມາດຕາ 255 ຂອງປະມວນກົດໝາຍຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 258 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 288 ການຄຸ້ມຄອງ, ບຳລຸງ ແລະ ການຮັກສາຊັບຮ່ວມ

ເຈົ້າກຳມະສິດຮ່ວມ ມີຄວາມຮັບຜິດຊອບຮ່ວມກັນໃນການຄຸ້ມຄອງ, ບຳລຸງ ແລະ ຮັກສາຊັບສິ່ງຂອງຮ່ວມ.

ເຈົ້າກຳມະສິດຮ່ວມ ຜູ້ໃດໜຶ່ງສາມາດທຳການສ້ອມແປງ, ບຳລຸງ, ຮັກສາ ຊັບຮ່ວມທີ່ບໍ່ມີມູນຄ່າສູງຢ່າງເປັນປົກກະຕິ ໂດຍບໍ່ຈຳເປັນຕ້ອງໄດ້ຮັບການເຫັນດີຈາກເຈົ້າກຳມະສິດຮ່ວມອື່ນ. ສ່ວນການສ້ອມແປງ, ບຳລຸງ, ຮັກສາຊັບສິ່ງຂອງຮ່ວມ ທີ່ມີມູນຄ່າສູງນັ້ນ ຈະເຮັດໄດ້ ກໍຕໍ່ເມື່ອໄດ້ຮັບຄຳເຫັນດີ ຂອງບັນດາເຈົ້າກຳມະສິດຮ່ວມ ຫຼາຍກວ່າເຄິ່ງໜຶ່ງ.

ໃນສະພາບການອັນຮີບດ່ວນ ເຈົ້າກຳມະສິດຮ່ວມໃດໜຶ່ງ ມີສິດດຳເນີນມາດຕະການຕ່າງໆເທົ່າທີ່ຈຳເປັນ ເພື່ອບຳລຸງຮັກສາຊັບສິ່ງຂອງຮ່ວມ ໂດຍບໍ່ຈຳເປັນຕ້ອງໄດ້ຮັບການເຫັນດີຈາກເຈົ້າກຳມະສິດຮ່ວມຜູ້ອື່ນກໍໄດ້ ແຕ່ພາຍຫຼັງສຳເລັດແລ້ວ ຕ້ອງແຈ້ງໃຫ້ພວກກ່ຽວຊາບ.

ເຈົ້າກຳມະສິດຮ່ວມ ຕ້ອງອອກຄ່າໃຊ້ຈ່າຍໃນການຄຸ້ມຄອງ, ບຳລຸງ, ຮັກສາຊັບສິ່ງຂອງຮ່ວມ ລວມທັງຄ່າອາກອນຮ່ວມກັນ ຕາມສ່ວນຂອງຕົນ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນ ກ່ຽວກັບການຄຸ້ມຄອງ, ບຳລຸງ ແລະ ການຮັກສາຊັບຮ່ວມ ລວມ ທັງສິດ ແລະ ພັນທະ ຂອງເຈົ້າກຳມະສິດຮ່ວມ.
ຕົວຢ່າງ	**1. ກ, ຂ** ແລະ **ຄ** ໄດ້ຕົກລົງຊື້ລົດເພື່ອມາຂົນສິ່ງສິນຄ້າ ຊຶ່ງພວກກ່ຽວໄດ້ຕົກລົງກັນອອກເງິນຄົນລະ 200.000 ກີບ ຕໍ່ເດືອນ ເພື່ອນຳໄປໃຊ້ຈ່າຍໃນການອະນາໄມລ້າງລົດແຕ່ລະຄັ້ງ, ສູບລົມລົດ, ຈອດຢາງລົດຖ້າລົດຫາກຮົ່ວ, ເສຍຄ່າທາງ, ຄ່າປະກັນໄພ ແລະ ຄ່າໃຊ້ຈ່າຍອື່ນທີ່ເປັນການຄຸ້ມຄອງ, ບຳລຸງ ຮັກສາລົດ. **2. ກ** ໄດ້ນຳໃຊ້ລົດທີ່ເປັນກຳມະສິດຮ່ວມນັ້ນໄປຂົນເຄື່ອງໃຫ້ **ກ** ແຕ່ຕາໄຟລົດບໍ່ຮຸ່ງ **ກ** ຈຶ່ງໄດ້ເອົາລົດໄປປ່ຽນດອກໄຟຕາລົດໃໝ່ໃນລາຄາ 50.000 ກີບ, ກໍລະນີນີ້ ຄ່າໃຊ້ຈ່າຍດັ່ງກ່າວ ເປັນຄ່າໃຊ້ຈ່າຍທີ່ບໍ່ສູງ ສະນັ້ນ **ກ** ຕ້ອງຮັບຜິດຊອບເອງ, ໃນເວລາເດີນທາງ ກັບ ຢາງຕີນລົດໄດ້ແຕກຍ້ອນສະພາບຢາງລົດເກົ່າ ດັ່ງນັ້ນ **ກ** ຈຶ່ງຈຳເປັນຕ້ອງປ່ຽນຢາງຕີນລົດໃໝ່, ເມື່ອເປັນແນວນັ້ນ, **ກ** ໄດ້ໂທປຶກສາກັບ **ຂ** ແລະ **ຄ** ແລ້ວ, ແຕ່ **ຂ** ບໍ່ເຫັນດີນຳ, **ກ** ໄດ້ຕັດສິນໃຈປ່ຽນຢາງຕີນລົດທີ່ແຕກນັ້ນໃໝ່. ກໍລະນີນີ້ **ກ, ຂ** ແລະ **ຄ** ທັງສາມຄົນ ກໍຕ້ອງຮັບຜິດຊອບຄ່າໃຊ້ຈ່າຍຮ່ວມກັນ ເຖິງວ່າ **ຂ** ບໍ່ເຫັນດີນຳກໍຕາມ.

ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາດຈາກ ມາດຕາ 25 ວັກ 2 ກົດໝາຍວ່າດ້ວຍກຳມະສິດ ປີ 1990 ເພື່ອກຳນົດກ່ຽວກັບ ສິດໃນການຄຸ້ມຄອງ, ບຳລຸງ ແລະ ການຮັກສາຊັບຮ່ວມຂອງເຈົ້າກຳມະສິດຮ່ວມ ໃຫ້ຮັດກຸມ.
ຂໍ້ມູນກ່ຽວກັບ ປະມວນກົດໝາຍ ແພ່ງຂອງປະເທດອື່ນ	ມາດຕາ 744 ຂອງປະມວນກົດໝາຍແພ່ງເຢຍລະມັນ; ມາດຕາ 1362 ຂອງປະມ່ວນກົດໝາຍແພ່ງ ແລະ ພານິດໄທ ; ມາດຕາ 253 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 289 ຜົນສະທ້ອນຕໍ່ຜູ້ໄດ້ຮັບຜົນປະໂຫຍດຕໍ່

ການຕົກລົງຂອງເຈົ້າກຳມະສິດຮ່ວມກ່ຽວກັບ ການຄອບຄອງ, ນຳໃຊ້, ໄດ້ຮັບໝາກຜົນ ແລະ ຊື້ຂາດ ຕໍ່ຊັບສິ່ງຂອງຮ່ວມນັ້ນ ມີຜົນອັນດຽວກັນສຳລັບຜູ້ໄດ້ຮັບຜົນປະໂຫຍດຕໍ່.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນວ່າ ການຕົກລົງ ຂອງເຈົ້າກຳມະສິດຮ່ວມ ມັນມີຜົນຕໍ່ກັບຜູ້ໄດ້ຮັບຜົນປະໂຫຍດຕໍ່ໄປ.
ຕົວຢ່າງ	**ກ, ຄ** ແລະ **ຂ** ຊື້ລົດຂົນສົ່ງຮ່ວມກັນ ຊຶ່ງຄັນນັ້ນມີມູນຄ່າ 300,000,000 ກີບ ໂດຍ **ກ, ຂ** ແລະ **ຄ** ອອກເງິນ ຄົນລະ 100,000,000 ກີບ, ໃນນັ້ນພວກກ່ຽວໄດ້ຕົກລົງກັນວ່າ ໃນແຕ່ລະເດືອນ ແຕ່ລະຄົນຕ້ອງອອກເງິນກັນຄົນລະ 200.000 ກີບ ເພື່ອເປັນຄ່າບຳລຸງຮັກສາລົດເຊັ່ນ ຄ່າລ້າງລົດ, ຈອດຢາງລົດ ຖ້າລົດຫາກຮົ່ວ, ເສຍຄ່າທາງ, ຄ່າປະກັນໄພ ແລະ ຄ່າໃຊ້ຈ່າຍອື່ນທີ່ຈຳເປັນ ໃນການປົກປັກຮັກສາລົດ. ຕໍ່ມາ **ກ** ໄດ້ ຂາຍສ່ວນຂອງຕົນໃຫ້ **ງ**, ແລະ **ຄ** ກໍ ໄດ້ເສຍຊີວິດ ໂດຍມີ **ຈ** ຜູ້ເປັນລູກມາສືບທອດມູນມໍຣະດົກ ຫຼື ພູດຂອງ **ຄ.** ໃນກໍລະນີດັ່ງກ່າວ ຜົນຂອງການຕົກລົງກ່ຽວກັບຄ່າຄຸ້ມຄອງ, ບຳລຸງ, ຮັກສາຊັບຮ່ວມນັ້ນ ກໍມີຜົນຕໍ່ **ງ** ແລະ **ຈ** ເຊັ່ນດຽວກັນ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງຂຶ້ນໃໝ່ ເພື່ອກຳນົດໃຫ້ເຫັນກ່ຽວກັບຜົນສະທ້ອນ ຕໍ່ຜູ້ໄດ້ຮັບຜົນປະໂຫຍດຕໍ່ໄປກ່ຽວກັບຊັບຮ່ວມ ແລະ ໃນມາດຕາ 25 ກົດໝາຍວ່າດ້ວຍກຳມະສິດ ປີ 1990 ໄດ້ກຳນົດກ່ຽວກັບກຳມະສິດຮ່ວມ, ແຕ່ບໍ່ໄດ້ກຳນົດກ່ຽວກັບຜົນສະທ້ອນຕໍ່ຜູ້ໄດ້ຮັບຜົນປະໂຫຍດ ຕໍ່ໄປກ່ຽວກັບຊັບຮ່ວມ, ຈຶ່ງເຫັນວ່າມີຄວາມຈຳເປັນຕ້ອງໄດ້ກຳນົດເຂົ້າຕື່ມ ເພື່ອໃຫ້ມີຄວາມເປັນເອກະພາບ ແລະ ສະດວກໃຫ້ແກ່ເຈົ້າກຳມະສິດ ໃນການນຳໃຊ້ຊັບສິ່ງຂອງຮ່ວມຢ່າງຖືກຕ້ອງ ແລະ ເປັນປະໂຫຍດ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 746 ຂອງປະມວນກົດໝາຍແພ່ງເຢຍລະມັນ; ມາດຕາ 254 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 290 ການແບ່ງປັນກຳມະສິດຮ່ວມ

ເຈົ້າກຳມະສິດຮ່ວມຜູ້ໃດໜຶ່ງ ມີສິດທວງໃຫ້ແບ່ງປັນຊັບສິ່ງຂອງຮ່ວມ ເວລາໃດກໍໄດ້, ເວັ້ນເສຍ ແຕ່ໄດ້ຕົກລົງກັນ ຫຼື ກົດໝາຍໄດ້ກຳນົດໄວ້ເປັນຢ່າງອື່ນ.

ໃນການແບ່ງປັນນັ້ນ ຖ້າຊັບສິ່ງຂອງຮ່ວມ ບໍ່ສາມາດແຍກອອກຈາກກັນໄດ້ເປັນສ່ວນ ກໍຕ້ອງຕີ ມູນຄ່າຊັບສິ່ງຂອງດັ່ງກ່າວເປັນເງິນຕາມສ່ວນ ເພື່ອແບ່ງປັນກັນ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນວ່າ ເຈົ້າກຳມະສິດ ຮ່ວມສາມາດທວງໃຫ້ແບ່ງປັນຊັບສິ່ງຂອງຮ່ວມ ຊຶ່ງເປັນຊັບທີ່ເປັນເປົ້າໝາຍຂອງກຳມະສິດຮ່ວມໄດ້, ພ້ອມທັງໃຫ້ເຫັນວິທີການໃນການແບ່ງປັນຊັບດັ່ງກ່າວ.
ຕົວຢ່າງ	**ກ, ຂ** ແລະ **ຄ** ມີທີ່ດິນຕອນໜຶ່ງທີ່ເປັນກຳມະສິດຮ່ວມ ຊຶ່ງໄດ້ມາຈາກການສືບທອດມູນມໍຣະດົກ ຕໍ່ມາ **ກ** ໄດ້ສະເໜີແບ່ງປັນຊັບຮ່ວມ ຊຶ່ງ **ຂ** ແລະ **ຄ** ກໍເຫັນດີ ແລະ ພ້ອມກັນຕີມູນຄ່າຂອງທີ່ດິນຕອນດັ່ງກ່າວເປັນເງິນ 300,000,000 ກີບ ເມື່ອຂາຍໄດ້ແລ້ວ **ກ, ຂ** ແລະ **ຄ** ກໍຈະໄດ້ຜູ້ລະ 100,000,000 ກີບ ຕາມສ່ວນ ຫຼື ພູດເທົ່າກັນ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 25 ວັກ 3 ກົດໝາຍວ່າດ້ວຍກຳມະສິດ ປີ 1990ເພື່ອກຳນົດກ່ຽວກັບ ການແບ່ງປັນຊັບສິ່ງຂອງທີ່ເປັນກຳມະສິດຮ່ວມໃຫ້ຣັດກຸມ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 219 ຂອງປະມວນກົດໝາຍແພ່ງຫວຽດນາມ; ມາດຕາ 256 ແລະ 258 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 291 ການສິ້ນສຸດກຳມະສິດຮ່ວມ

ກຳມະສິດຮ່ວມກ່ຽວກັບຊັບສິ່ງຂອງໃດໜຶ່ງ ຈະສິ້ນສຸດລົງ ໃນກໍລະນີ ດັ່ງນີ້:

1. ຊັບສິ່ງຂອງຮ່ວມ ຖືກແບ່ງປັນກັນ;
2. ເຈົ້າກຳມະສິດຮ່ວມທັງໝົດ ໄດ້ຊື້ຂາດກ່ຽວກັບຊັບສິ່ງຂອງຮ່ວມນັ້ນ ໃຫ້ຜູ້ໃດໜຶ່ງ ເປັນກຳມະສິດແຕ່ພຽງຜູ້ດຽວ;
3. ກໍລະນີອື່ນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 315 ຫາ 319 ຂອງປະມວນກົດໝາຍສະບັບນີ້.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນ ກ່ຽວກັບການສິ້ນສຸດກຳມະສິດຮ່ວມ.
ຕົວຢ່າງ	**1. ຊັບສິ່ງຂອງຮ່ວມ ຖືກແບ່ງປັນກັນ.** ຕົວຢ່າງ ຂໍ້1 ສາມາດເບິ່ງໄດ້ຈາກຕົວຢ່າງມາດຕາ 290 ຂອງບົດອະທິບາຍປະມວນກົດໝາຍແພ່ງ. **2. ເຈົ້າກຳມະສິດຮ່ວມທັງໝົດ ໄດ້ຊື້ຂາດກ່ຽວກັບຊັບສິ່ງຂອງຮ່ວມນັ້ນ** **ກ, ຂ** ແລະ **ຄ** ຮ່ວມກັນຊື້ທີ່ດິນໜຶ່ງຕອນໃນລາຄາ 100,000,000 ກີບ ຕໍ່ມາ **ກ** ແລະ **ຂ** ໄດ້ຕົກລົງມອບໂອນສິດນຳໃຊ້ທີ່ດິນດັ່ງກ່າວນັ້ນ ໃຫ້ **ຄ** ເປັນກຳມະສິດ ພຽງຜູ້ດຽວ. **3. ກ** ແລະ **ຂ** ມີຄວາຍໂຕໜຶ່ງ ເປັນກຳມະສິດຮ່ວມ, ຕໍ່ມາ ຄວາຍໂຕດັ່ງກ່າວໄດ້ຕາຍແລ້ວ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງຂຶ້ນໃໝ່ເພື່ອກຳນົດໃຫ້ເຫັນກ່ຽວກັບຫຼັກການສິ້ນສຸດກຳມະສິດຮ່ວມ ແລະ ໃນມາດຕາ 25 ຂອງກົດໝາຍວ່າດ້ວຍກຳມະສິດ ປີ 1990 ໄດ້ກຳນົດກ່ຽວກັບກຳມະສິດຮ່ວມ, ແຕ່ບໍ່ໄດ້ກຳນົດແຈ້ງຫຼັກການສິ້ນສຸດກຳມະສິດຮ່ວມ, ຈຶ່ງເຫັນວ່າ ມີຄວາມຈຳເປັນຕ້ອງໄດ້ກຳນົດເຂົ້າຕື່ມ ເພື່ອໃຫ້ມີຄວາມເປັນເອກະພາບ ແລະ ສະດວກໃຫ້ແກ່ເຈົ້າກຳມະສິດ ໃນການນຳໃຊ້ຊັບສິ່ງຂອງຮ່ວມຢ່າງຖືກຕ້ອງ ແລະ ເປັນປະໂຫຍດເຂົາເຈົ້າ.

ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 220 ຂອງປະມວນກົດໝາຍຫວຽດນາມ.
ມາດຕາອ້າງອີງ	ມາດຕາ 315 -319 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ໝວດທີ 6
ການໄດ້ກຳມະສິດ

ມາດຕາ 292 ການໄດ້ກຳມະສິດ

ການໄດ້ມາເປັນກຳມະສິດແມ່ນເກີດຂຶ້ນນັບແຕ່ເວລາທີ່ໄດ້ມອບແລະ/ຫຼືໄດ້ຮັບຊັບສິ່ງຂອງໂດຍຖືກຕ້ອງຕາມກົດໝາຍ.

ກຳມະສິດອາດໄດ້ມາຕາມສັນຍາກ່ອນການມອບ ແລະ/ຫຼື ຮັບຊັບນັ້ນກໍໄດ້. ຖ້າຊັບສິ່ງຂອງນັ້ນຫາກຍັງຈະຕ້ອງໄດ້ຂຶ້ນທະບຽນແລ້ວກຳມະສິດ ແມ່ນໄດ້ມານັບແຕ່ເວລາທີ່ໄດ້ຂຶ້ນທະບຽນເປັນຕົ້ນໄປເຖິງວ່າຊັບສິ່ງຂອງນັ້ນຈະໄດ້ມອບໃຫ້ແກ່ກັນແລ້ວກໍຕາມ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນ ເຖິງຫຼັກການທົ່ວ ໄປກ່ຽວກັບກາລະເວລາ ຂອງການໄດ້ກຳມະສິດ
ຕົວຢ່າງ	**1. ກ** ໄດ້ຊື້ເກີບ 1 ຄູ່ນຳ **ຂ** .**ກ** ໄດ້ຈ່າຍເງິນໃຫ້ **ຂ** ແລະ **ຂ** ໄດ້ມອບເກີບດັ່ງກ່າວໃຫ້ **ກ** ກໍລະນີນີ້ **ກ** ເປັນກຳມະສິດຕໍ່ເກີບຄູ່ນີ້ ນັບແຕ່ເວລາທີ່ໄດ້ຮັບເກີບເປັນຕົ້ນໄປ. (ມາດຕາ 406 ວັກ 5 ຂອງປະມວນກົດໝາຍແພ່ງ). **2. ກ** ໄດ້ຕົກລົງຂາຍ ງົວແມ່ 1 ໂຕໃຫ້ **ຂ** ແລະ **ຂ** ກໍໄດ້ຈ່າຍເງິນໝົດແລ້ວ ແຕ່ເນື່ອງຈາກວ່າ ງົວແມ່ໂຕທີ່ຂາຍນັ້ນ ຍັງມີລູກນ້ອຍຄາກົນມົມຢູ່ ດັ່ງນັ້ນຈຶ່ງຖ້າໃຫ້ລູກ ງົວ ປະມົມສາກ່ອນ **ຂ** ຜູ້ຊື້ຈຶ່ງມາຮັບເອົາ ງົວແມ່ໂຕນັ້ນ ຕາມສັນຍາ ໃນກໍລະນີນີ້ **ຂ** ໄດ້ກຳມະສິດຕໍ່ ງົວໂຕທີ່ຊື້ນັ້ນນັບແຕ່ເວລາທີ່ **ກ** ແລະ **ຂ** ໄດ້ຕົກລົງເປັນຕົ້ນໄປ. **3. ກ** ໄດ້ຊື້ລົດຈັກນຳ **ຂ, ກ** ຈະເປັນເຈົ້າກຳມະສິດຕໍ່ລົດຈັກຄັນນັ້ນນັບແຕ່ມື້ທີ່ **ກ** ໄດ້ໄປຂຶ້ນທະບຽນພາຫະນະເປັນຕົ້ນໄປ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 28 ຂອງກົດໝາຍວ່າດ້ວຍກຳມະສິດ ປີ 1990 ມາກຳນົດໂດຍເນື້ອໃນສ່ວນໃຫຍ່ແມ່ນບໍ່ມີການປ່ຽນແປງ, ແຕ່ວ່າມາດຕານີ້ໄດ້ປັບປຸງບາງສ່ວນດັ່ງນີ້: ມາດຕາ 28 ຂອງກົດໝາຍວ່າດ້ວຍກຳມະສິດ ໄດ້ກຳນົດກ່ຽວກັບການມອບກຳມະສິດໂດຍຜ່ານການມອບ ຫຼື ຮັບຊັບສິ່ງຂອງຊຶ່ງເຫັນວ່າບໍ່ຄົບຖ້ວນເນື່ອງຈາກວ່າ ບາງກໍລະນີ ການມອບຕ້ອງໄປພ້ອມກັບ ການຮັບຊັບສິ່ງຂອງ. ສະນັ້ນ, ຈຶ່ງໄດ້ປັບປຸງຈາກການມອບ ຫຼື ການຮັບຊັບສິ່ງຂອງ ມາເປັນການມອບແລະ/ຫຼືການຮັບຊັບສິ່ງຂອງ. - ຄວາມໝາຍຂອງການມອບ ແລະ/ຫຼື ການຮັບຊັບສິ່ງຂອງ ໝາຍເຖິງ ການໄດ້ມາເປັນກຳມະສິດດ້ວຍການມອບ ແລະ ການຮັບໃນເວລາດຽວກັນ ຫຼື ມີພຽງແຕ່ການຮັບເທົ່ານັ້ນ.

	- ມາດຕາ 28 ຂອງກົດໝາຍว่าด้วยกำมะสิด ได้ກຳນົດກ່ຽວກັບການ ໄດ້ກຳມະສິດ ໂດຍມີ 3 ເນື້ອໃນຄືການມອບຮັບຊັບສິ່ງຂອງ, ການໄດ້ ກຳມະສິດ ຕາມສັນຍາກ່ອນການມອບ ແລະ ການຮັບຊັບສິ່ງຂອງ ແລະ ການຂຶ້ນທະບຽນ, ແຕ່ໄດ້ກຳນົດເປັນສອງວັກ. ສະນັ້ນ, ຈຶ່ງກຳນົດເປັນ ສາມວັກ ເພື່ອໃຫ້ເຂົ້າໃຈງ່າຍ ແລະ ສະດວກໃນການນຳໃຊ້.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງຂອງປະເທດອື່ນ	ມາດຕາ 176 ຂອງປະມວນກົດໝາຍແພ່ງ ຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 294, 295, 296, 297, 406 ວັກ 5, 418, 420 ວັກ1 ແລະ 424 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 293 ພື້ນຖານຂອງການໄດ້ມາເປັນກຳມະສິດ

ການໄດ້ມາເປັນກຳມະສິດ ມີພື້ນຖານ ດັ່ງນີ້:

1. ສັນຍາ;
2. ການສືບທອດມູນມໍຣະດົກ;
3. ການໄດ້ຊັບສິ່ງຂອງທີ່ບໍ່ມີເຈົ້າຂອງ;
4. ການເກັບຊັບສິ່ງຂອງຕົກເຮ່ຍ;
5. ການໄດ້ສັດຂາດການຮັກສາ;
6. ການພົບເຫັນວັດຖຸມີຄ່າ;
7. ການໂຮມຊັບສິ່ງຂອງ;
8. ອາຍຸຄວາມ;
9. ກໍລະນີອື່ນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ຈຸດປະສົງ	ເພື່ອກຳນົດ ໃຫ້ເຫັນໄດ້ພາບລວມ ຂອງພື້ນຖານການໄດ້ກຳມະສິດ ໃນກໍລະນີ ຕ່າງໆ ເປັນແຕ່ລະກໍລະນີ.
ຕົວຢ່າງ	ມາດຕາ 406 ວັກ 5, 420 ຂອງປະມວນກົດໝາຍ ແພ່ງ; ມາດຕາ 566 ຂອງປະມຂອງປະມວນກົດໝາຍ ແພ່ງ ມາດຕາ 302 ຂອງບົດອະທິບາຍປະມວນກົດໝາຍ ແພ່ງ; ມາດຕາ 303 ຂອງບົດອະທິບາຍປະມວນກົດໝາຍ ແພ່ງ; ມາດຕາ 304 ຂອງບົດອະທິບາຍປະມວນກົດໝາຍ ແພ່ງ; ມາດຕາ 306 ຂອງບົດອະທິບາຍປະມວນກົດໝາຍ ແພ່ງ; ມາດຕາ 314 ຂອງບົດອະທິບາຍປະມວນກົດ ໝາຍແພ່ງ; ມາດຕາ 9 ກໍລະນີອື່ນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

	ກໍລະນີ 1. **ກ** ໄດ້ຊື້ຄວາຍແມ່ ໂຕ 1 ຈາກ **ຂ** ທີ່ກຳລັງຈະເກີດລູກ ເມື່ອລູກຄວາຍເກີດອອກມາກຳມະສິດຈະເປັນຂອງ **ກ.** (ມາດຕາ 298 ຂອງປະມວນກົດໝາຍແພ່ງ). ກໍລະນີ 2. ສາມາດເບິ່ງເພີ່ມເຕີມໃນກໍລະນີ ການໄດ້ມາເປັນກຳມະສິດຂອງລັດ (ມາດຕາ 264 ຂອງປະມວນກົດໝາຍແພ່ງ). ກໍລະນີ 3. ສາມາດເບິ່ງເພີ່ມເຕີມໃນກໍລະນີ ການໄດ້ມາເປັນກຳມະສິດຂອງສະຫະກອນ ຫຼື ອົງການຈັດຕັ້ງລວມໝູ່ອື່ນ (ມາດຕາ 270 ຂອງປະມວນກົດໝາຍແພ່ງ).
ເຫດຜົນໃນການປັບປຸງ	ມາດຕານີ້ ປັບປຸງມາຈາກ ມາດຕາ 5 ຂອງກົດໝາຍວ່າດ້ວຍກຳມະສິດ ປີ 1990 ເພື່ອໃຫ້ສອດຄ່ອງກັບວິທີຂຽນກົດໝາຍຂອງປະເທດເຮົາ ໂດຍກຳນົດມາດຕາເປີດກ່ອນ ແລ້ວ ຈຶ່ງກຳນົດມາດຕາອະທິບາຍຕາມຫຼັງ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 221 ປະມວນກົດໝາຍແພ່ງຫວຽດນາມປີ 2015.
ມາດຕາອ້າງອີງ	ມາດຕາ 294, 295, 296, 297, 298, 299, 300, 301, 302, 303, 304, 306, 311, 314, 406 ວັກ 5 ແລະ 566 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 294 ການມອບຊັບສິ່ງຂອງ

ການມອບຊັບສິ່ງຂອງ ແມ່ນການເອົາຊັບສິ່ງຂອງໃຫ້ບຸກຄົນຫຼືອົງການຈັດຕັ້ງໃດໜຶ່ງຊຶ່ງເອີ້ນວ່າ ຜູ້ຮັບ.

ການມອບຊັບສິ່ງຂອງ ຫຼື ເອກະສານ ໂດຍຜ່ານຜູ້ຂົນສົ່ງ ຫຼື ໄປສະນີ ເພື່ອສົ່ງໄປໃຫ້ຜູ້ຮັບ ກໍຈະຖືວ່າເປັນການມອບຊັບສິ່ງຂອງໃຫ້ຜູ້ຮັບແລ້ວ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນ ຄວາມໝາຍຂອງການມອບຕົວຈິງ ຊຶ່ງນອນຢູ່ໃນເງື່ອນໄຂໜຶ່ງຂອງການໄດ້ກຳມະສິດ ກໍຄືການມອບຊັບສິ່ງຂອງ.
ຕົວຢ່າງ	**1. ກ** ໄດ້ມອບຄອມພິວເຕີໜຶ່ງໜ່ວຍ ໃຫ້ **ຂ** ແລະ **ຂ** ກໍໄດ້ຮັບເອົາ ຄອມພິວເຕີ. **2. ກ** ມີຈຸດປະສົງຈະມອບຄອມພິວເຕີໃຫ້ **ຂ** ທີ່ຢູ່ຕ່າງແຂວງ ດັ່ງນັ້ນ **ກ** ຈຶ່ງໄດ້ຝາກໃຫ້ ບໍລິສັດຂົນສົ່ງ ເພື່ອສົ່ງໃຫ້ **ຂ** ກໍລະນີນີ້ ຖືວ່າ **ກ** ໄດ້ມອບຄອມພິວເຕີໃຫ້ **ຂ** ແລ້ວ;
ເຫດຜົນໃນການປັບປຸງ	ມາດຕານີ້ ປັບປຸງມາຈາກ ມາດຕາ 29 ຂອງກົດໝາຍວ່າດ້ວຍກຳມະສິດ ປີ 1990 ໂດຍປັບປຸງ ປະໂຫຍກກ່ຽວກັບການມອບຊັບສິ່ງຂອງ ໂດຍຜ່ານໄປສະນີ ຫຼື ຜູ້ຂົນສົ່ງ ໄວ້ໃນວັກທີ 2 ເພື່ອເຮັດໃຫ້ມີຄວາມຊັດເຈນຂຶ້ນຕື່ມ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 182 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ. ມາດຕາ 873 ແລະ 929 ຂອງປະມວນກົດໝາຍແພ່ງເຢຍລະມັນ.
ມາດຕາອ້າງອີງ	ມາດຕາ 295, 296, 297 ແລະ 245 ຂໍ້ 1 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 295 ການມອບຊັບສິ່ງຂອງໃຫ້ເປັນກຳມະສິດຂອງຜູ້ຄອບຄອງ

ຊັບສິ່ງຂອງທີ່ຢູ່ໃນການຄອບຄອງຂອງຜູ້ຄອບຄອງມາກ່ອນແລ້ວ ຖ້າຫາກມີການຕົກລົງກັນກ່ຽວກັບການປ່ຽນກຳມະສິດ ຈາກເຈົ້າກຳມະສິດເດີມ ໄປຫາຜູ້ຄອບຄອງນັ້ນ ກໍໃຫ້ຖືວ່າໄດ້ມອບຊັບສິ່ງຂອງໃຫ້ແກ່ກັນແລ້ວ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນ ກ່ຽວກັບການມອບຊັບສິ່ງຂອງ ຊຶ່ງເປັນໜຶ່ງໃນເງື່ອນໄຂຂອງການໄດ້ກຳມະສິດນັ້ນກໍລະນີຜູ້ໄດ້ກຳມະສິດ (ຜູ້ຮັບ) ຫາກໄດ້ຄອບຄອງຊັບສິ່ງຂອງທີ່ເປັນເປົ້າໝາຍນັ້ນມາກ່ອນແລ້ວ, ການຕົກລົງກັນ ລະຫວ່າງ ຄູ່ກໍລະນີກໍຖືວ່າເປັນການມອບຊັບສິ່ງຂອງໃຫ້ກັນແລ້ວ. ໂດຍບໍ່ຈຳເປັນຕ້ອງສົ່ງຊັບສິ່ງຂອງທີ່ເປັນເປົ້າໝາຍນັ້ນ ຄືນຫາຜູ້ໃຫ້ປ່ຽນກຳມະສິດ (ຜູ້ມອບ) ກ່ອນແລ້ວຈຶ່ງກັບມາມອບໃຫ້ກັນຄືນໃໝ່.
ຕົວຢ່າງ	**ກ** ມີງົວ 10 ໂຕ ແລະ ກໍໃຫ້ **ຂ** ເປັນຄົນລ້ຽງ ງົວຈຳນວນນັ້ນ, ຕໍ່ມາ **ກ** ໄດ້ຕົກລົງມອບງົວ 1 ໂຕໃຫ້ **ຂ** ເປັນກຳມະສິດເພື່ອເປັນຄ່າຕອບແທນການລ້ຽງງົວ. ກໍລະນີນີ້ຖືວ່າ **ກ** ໄດ້ມອບ ງົວ ໂຕນັ້ນໃຫ້ **ຂ** ໄປແລ້ວ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງຂຶ້ນໃໝ່ ເພື່ອເຮັດໃຫ້ການໂອນກຳມະສິດ ຂອງຊັບສິ່ງຂອງ ຕາມການຕົກລົງກັນໃຫ້ຜູ້ຄອບຄອງຊັບກ່ອນແລ້ວ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 929 ຂອງປະມວນກົດໝາຍແພ່ງ ເຢຍລະມັນ. ມາດຕາ 182 ວັກ 2 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ (ຄືກັນກັບ ມາດຕາ 245 ຂໍ້ 2 ຂີດໜ້າ 1, ຂອງປະມວນກົດໝາຍແພ່ງ).
ມາດຕາອ້າງອີງ	ມາດຕາ 245 ຂໍ້ 2 ຂີດໜ້າ 1, 294, 296 ແລະ 297 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 296 ການມອບຊັບສິ່ງຂອງທີ່ຍັງຢູ່ໃນການຄອບຄອງຂອງເຈົ້າກຳມະສິດ

ຊັບສິ່ງຂອງທີ່ຍັງຢູ່ໃນການຄອບຄອງຂອງເຈົ້າກຳມະສິດ ຖ້າຫາກມີການຕົກລົງກັນກ່ຽວກັບການປ່ຽນກຳມະສິດຈາກເຈົ້າກຳມະສິດເດີມ ໄປຫາເຈົ້າກຳມະສິດໃໝ່ ກໍໃຫ້ຖືວ່າໄດ້ມອບຊັບສິ່ງຂອງໃຫ້ແກ່ກັນແລ້ວ, ແຕ່ເຈົ້າກຳມະສິດເດີມ ຍັງມີພັນທະປົກປັກຮັກສາຊັບສິ່ງຂອງດັ່ງກ່າວໂດຍບໍ່ໃຫ້ມີການເສຍຫາຍຫຼືເປ່ເພຈົນກວ່າເຈົ້າກຳມະສິດຜູ້ໃໝ່ຈະມາຮັບເອົາ.

ຈຸດປະສົງ	ເພື່ອກຳນົດກ່ຽວກັບການມອບຊັບສິ່ງຂອງ ຊຶ່ງເປັນໜຶ່ງໃນເງື່ອນໄຂຂອງການໄດ້ກຳມະສິດນັ້ນ ເມື່ອມີການຕົກລົງກັນ ລະຫ່ວາງ ຄູ່ກໍລະນີວ່າ ໃຫ້ຜູ້ປ່ຽນກຳມະສິດ (ຜູ້ມອບ) ສືບຕໍ່ຄອບຄອງພາຍຫຼັງທີ່ໄດ້ມອບຊັບສິ່ງຂອງທີ່ເປັນເປົ້າໝາຍໃຫ້ຜູ້ໄດ້ກຳມະສິດ (ຜູ້ຮັບ) ແລ້ວກໍຕາມ, ມີພຽງການຕົກລົງກັນ ລະຫ່ວາງ ຄູ່ກໍລະນີດັ່ງກ່າວ ກໍຖືວ່າເປັນການມອບຊັບສິ່ງຂອງໃຫ້ກັນແລ້ວ. ບໍ່ຈຳເປັນຕ້ອງມອບຊັບສິ່ງຂອງທີ່ເປັນເປົ້າໝາຍນັ້ນໄປຫາຜູ້ຮັບກ່ອນແລ້ວຈຶ່ງເອົາກັບມາຄືນ.
ຕົວຢ່າງ	**ກ** ໄດ້ຕົກລົງມອບຕູ້ເຢັນໜ່ວຍໜຶ່ງໃຫ້ **ຂ** ເປັນກຳມະສິດ ແຕ່ຍ້ອນວ່າ **ຂ** ຜູ້ຮັບ ຍັງບໍ່ມີເວລາມາເອົາເທື່ອເຊິ່ງຕູ້ເຢັນດັ່ງກ່າວກໍຍັງຢູ່ນຳ **ກ** ຜູ້ມອບ ອີງຕາມການຕົກລົງເຫັນດີລະຫວ່າງ **ກ** ແລະ **ຂ** ຈຶ່ງຖືວ່າໄດ້ມອບຕູ້ເຢັນໜ່ວຍນັ້ນໃຫ້ **ຂ** ໄປແລ້ວ, ແຕ່ **ກ** ກໍຍັງຕ້ອງໄດ້ປົກປັກຮັກສາຕູ້ເຢັນດັ່ງກ່າວໂດຍບໍ່ໃຫ້ມີການເສຍຫາຍ ຫຼື ເປ່ເພຈົນກວ່າ **ຂ** ຈະມາຮັບເອົາໄປຄອບຄອງ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງຂຶ້ນໃໝ່ ເພື່ອຮັບຮູ້ການໂອນກຳມະສິດ ຂອງຊັບສິ່ງຂອງ ຈາກເຈົ້າກຳມະສິດເດີມ ໄປຫາເຈົ້າກຳມະສິດໃໝ່ ຊຶ່ງຊັບສິ່ງຂອງນັ້ນ ຍັງຢູ່ໃນການຄອບຄອງຂອງເຈົ້າກຳມະສິດເດີມ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 930 ຂອງປະມວນກົດໝາຍ ເຢຍລະມັນ. ມາດຕາ 183 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 294, 295, ແລະ 297 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 297 ການມອບຊັບສິ່ງຂອງທີ່ຢູ່ໃນການຄອບຄອງຂອງບຸກຄົນທີສາມ

ຊັບສິ່ງຂອງທີ່ຍັງຢູ່ໃນການຄອບຄອງຂອງບຸກຄົນທີສາມ ຖ້າມີການຕົກລົງກ່ຽວກັບການປ່ຽນແປງກຳມະສິດ ຈາກເຈົ້າກຳມະສິດເດີມ ໄປຫາເຈົ້າກຳມະສິດໃໝ່ ກໍໃຫ້ຖືວ່າໄດ້ມອບຊັບໃຫ້ແກ່ກັນແລ້ວ, ແຕ່ເຈົ້າກຳມະສິດເດີມ ຕ້ອງແຈ້ງໃຫ້ບຸກຄົນທີສາມທີ່ຄອບຄອງຊັບສິ່ງຂອງນັ້ນຊາບກ່ຽວກັບການປ່ຽນແປງກຳມະສິດນັ້ນ.

ຈຸດປະສົງ	ເພື່ອກຳນົດກ່ຽວກັບການມອບຊັບສິ່ງຂອງ ຊຶ່ງເປັນໜຶ່ງໃນເງື່ອນໄຂຂອງການໄດ້ກຳມະສິດ, ວິທີການມອບຊັບສິ່ງຂອງທີ່ຢູ່ໃນການຄອບຄອງ ຂອງບຸກຄົນທີສາມ. ຜູ້ປ່ຽນກຳມະສິດ(ຜູ້ມອບ)ບໍ່ຈຳເປັນຕ້ອງໃຫ້ບຸກຄົນທີສາມສົ່ງຊັບສິ່ງຂອງທີ່ເປັນເປົ້າໝາຍກັບຄືນມາຫາຕົນກ່ອນແລ້ວຈຶ່ງນຳເອົາໄປມອບໃຫ້ຜູ້ທີ່ຈະໄດ້ກຳມະສິດ (ຜູ້ຮັບ), ມີພຽງແຕ່ການຕົກລົງກັນ ລະຫ່ວາງ ຄູ່ກຳລະນີ ແລະ ມີການແຈ້ງຈາກຜູ້ມອບໄປຍັງບຸກຄົນທີສາມກໍຖືວ່າເປັນການມອບແລ້ວ.
ຕົວຢ່າງ	**ກ** ມີຄອມພິວເຕີ 50 ໜ່ວຍ, ໂດຍໄດ້ຝາກໄວ້ໃນສາງຂອງ **ຂ.** ຕໍ່ມາ **ກ** ໄດ້ຂາຍຄອມພິວເຕີ 50 ໜ່ວຍນັ້ນໃຫ້ **ຄ,** ແລະ ໄດ້ຮັບເງິນເປັນທີ່ຮຽບຮ້ອຍແລ້ວ. ຊຶ່ງໃນຕອນນັ້ນ **ກ** ກັບ **ຄ** ໄດ້ຕົກລົງກັນວ່າຄອມພິວເຕີ 50 ໜ່ວຍດັ່ງກ່າວນັ້ນຍັງຝາກໄວ້ໃນສາງຂອງ **ຂ** ຄືເກົ່າ. ແລ້ວ **ກ** ຕ້ອງໄດ້ແຈ້ງໃຫ້ **ຂ** ຜູ້ຮັບຝາກຊາບວ່າໄດ້ຂາຍຄອມພິວເຕີ 50 ໜ່ວຍດັ່ງກ່າວນັ້ນໃຫ້ **ຄ** ໄປແລ້ວ, ແຕ່ຍັງໃຫ້ **ຂ** ຮັກສາໄວ້ເພື່ອ **ຄ.** ສະນັ້ນ, ຖືວ່າ **ກ** ໄດ້ມອບຄອມພິວເຕີຈຳນວນດັ່ງກ່າວໃຫ້ **ຄ** ເປັນທີ່ຮຽບຮ້ອຍແລ້ວ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງຂຶ້ນໃໝ່ ເພື່ອຮັບຮູ້ການໂອນກຳມະສິດ ຂອງຊັບສິ່ງຂອງ ຈາກເຈົ້າກຳມະສິດເດີມ ໄປຫາເຈົ້າກຳມະສິດໃໝ່ ບຸກຄົນທີສາມຕ້ອງສົ່ງຊັບສິ່ງຂອງທີ່ຕົນຄອບຄອງ ຄືນໃຫ້ເຈົ້າກຳມະສິດເດີມແລ້ວມອບຮັບຊັບສິ່ງຂອງດັ່ງກ່າວໃຫ້ເຈົ້າກຳມະສິດໃໝ່ເຫັນວ່າຈະເປັນການສ້າງຄວາມຫຍຸ້ງຍາກໃຫ້ພວກກ່ຽວ, ຈຶ່ງກຳນົດມາດຕານີ້ເຂົ້າໃໝ່ເປັນຂໍ້ຍົກເວັ້ນ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 931 ຂອງປະມວນກົດໝາຍແພ່ງເຢຍລະມັນ; ມາດຕາ 184 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ294,295,296ແລະ245ວັກ2ຂີດໜ້າ3ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນຫຼື ປະເພນີສານ	ສືບຕໍ່ຄົນຄວ້າ.

ມາດຕາ 298 ການໄດ້ກຳມະສິດກ່ຽວກັບໝາກຜົນ

ໝາກຜົນທີ່ໄດ້ມາຈາກການນຳໃຊ້ຊັບສິ່ງຂອງໃດໜຶ່ງກໍຈະເປັນຂອງເຈົ້າກຳມະສິດກ່ຽວກັບຊັບສິ່ງຂອງເຫຼົ່ານັ້ນ, ເວັ້ນເສຍແຕ່ ກົດໝາຍ ຫຼື ສັນຍາ ຫາກໄດ້ກຳນົດໄວ້ເປັນຢ່າງອື່ນ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນ ກ່ຽວກັບຫຼັກການ ເພື່ອເຮັດໃຫ້ຮູ້ວ່າໝາກຜົນຂອງກຳມະສິດຈະຕົກເປັນຂອງໃຜ.
ຕົວຢ່າງ	**1. ກ** ມີ ງົວ ແມ່ ໂຕ 1 ທີ່ຖືພາ, ເມື່ອງົວນັ້ນ ເກີດລູກອອກມາ **ກ** ກໍຈະໄດ້ກຳມະສິດກ່ຽວກັບລູກງົວນັ້ນ. **2. ກ** ເອົາເຮືອນຂອງຕົນໃຫ້ **ຂ** ເຊົ່າ ແລະ **ກ** ໄດ້ຮັບຄ່າເຊົ່າແຕ່ລະເດືອນ. ໃນກໍລະນີນີ້, ຄ່າເຊົ່າເຮືອນແມ່ນໝາກຜົນ ທີ່ເປັນກຳມະສິດຂອງ **ກ** (ມາດຕາ 230 ວັກ 3 ຂອງປະມວນກົດໝາຍແພ່ງ)

ເຫດຜົນໃນການປັບປຸງ	ມາດຕານີ້ ໄດ້ປັບປຸງມາຈາກ ມາດຕາ 34 ຂອງກົດໝາຍກຳມະສິດນັ້ນໄດ້ກຳນົດຊື່ມາດຕາວ່າ ກຳມະສິດກ່ຽວກັບໝາກຜົນ ແລະ ລາຍໄດ້ ເຫັນວ່າບໍ່ເໝາະສົມ ຍ້ອນວ່າ ໝາກຜົນ ແມ່ນຄຳສັບກວມລວມ ແລະ ລວມເອົາ ລາຍໄດ້ ຈຶ່ງປ່ຽນຊື່ມາດຕາມາເປັນ ການໄດ້ກຳມະສິດກ່ຽວກັບໝາກຜົນ . ສຳລັບເນື້ອໃນຂອງມາດຕາ ກໍໄດ້ຕັດເອົາຄຳວ່າ ລາຍໄດ້ອອກ ເຊັ່ນດຽວກັນ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 148 ຂອງປະມວນກົດໝາຍແພ່ງ ແລະ ພານິດ ປະເທດໄທ; ມາດຕາ 89 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 241, 244, 257, 292 299 301 304 ແລະ 306 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 299 ການໄດ້ກຳມະສິດດ້ວຍການສືບທອດມູນມໍຣະດົກ

ມູນມໍຣະດົກທີ່ຜູ້ສືບທອດໄດ້ຮັບຈາກການສືບທອດຕາມກົດໝາຍຫຼືຕາມພິໄນກຳນັ້ນເປັນກຳມະສິດຫຼືກຳມະສິດຮ່ວມຂອງຜູ້ສືບທອດ ນັບແຕ່ເວລາທີ່ເຈົ້າມູນເສຍຊີວິດ.

ສຳລັບຜູ້ສືບທອດຮ່ວມແຕ່ລະຄົນນັ້ນ ຈະໄດ້ກຳມະສິດກ່ຽວກັບມູນມໍຣະດົກທີ່ເປັນພູດຂອງຕົນ ນັບແຕ່ເວລາທີ່ໄດ້ຮັບເອົາມູນມໍຣະດົກເປັນຕົ້ນໄປ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນ ຫຼັກການກ່ຽວກັບການປ່ຽນກຳມະສິດຕາມກົດໝາຍ ຫຼື ຕາມພິໄນກຳ ກໍລະນີເຈົ້າກຳມະສິດໃນຊັບສິ່ງຂອງໄດ້ເສຍຊີວິດ.
ຕົວຢ່າງ	**ກ** ມີລູກສີ່ຄົນ ຄື **ຂ, ຄ, ງ** ແລະ **ຈ** ຊຶ່ງ **ກ** ມີເຮືອນ 4 ຫຼັງ, ດິນ 5 ຕອນ, **ກ** ໄດ້ເສຍຊີວິດ ໂດຍບໍ່ໄດ້ເຮັດພິໄນກຳ ດັ່ງນັ້ນມູນມໍຣະດົກຂອງ **ກ** ທັງໝົດຈະຕົກມາເປັນກຳມະສິດຂອງ **ຂ, ຄ, ງ** ແລະ **ຈ**. ສ່ວນລູກແຕ່ລະຄົນຈະໄດ້ກຳມະສິດກ່ຽວກັບມູນມໍລະດົກທີ່ເປັນພູດຂອງຕົນ ນັບແຕ່ເວລາທີ່ໄດ້ແບ່ງປັນ ແລະ ໄດ້ຮັບເອົາມູນມໍຣະດົກເປັນຕົ້ນໄປ.
ເຫດຜົນໃນການປັບປຸງ	1. ມາດຕານີ້ໄດ້ປັບປຸງມາຈາກ ມາດຕາ 35 ຂອງກົດໝາຍວ່າດ້ວຍກຳມະສິດ ບໍ່ໄດ້ກຳນົດກ່ຽວກັບກຳມະສິດຕໍ່ມູນມໍລະດົກ ໃນໄລຍະເວລາຂອງການເສຍຊີວິດຂອງເຈົ້າມູນເຖິງເວລາ ຜູ້ສືບທອດມາຮັບເອົາມູນມໍລະດົກວ່າ ມູນມໍລະດົກດັ່ງກ່າວ ເປັນກຳມະສິດຂອງໃຜ ຊຶ່ງເຫັນວ່າ ບໍ່ສອດຄ່ອງກັບຄວາມເປັນຈິງ ແລະ ຫຼັກການສາກົນ ຈຶ່ງໄດ້ກຳນົດວ່າ ມູນດັ່ງກ່າວ ແມ່ນເປັນກຳມະສິດລວມຂອງຜູ້ສືບທອດ. 2. ສ່ວນວັກທີ 2 ຂອງມາດຕາ 35 ແມ່ນໄດ້ຮັກສາເນື້ອໃນຂອງວັກໄວ້ຄືເກົ່າ, ແຕ່ໄດ້ປ່ຽນຈາກ ມູນມໍຣະດົກທີ່ຜູ້ສືບທອດໄດ້ຮັບຈາກການສືບທອດ... ມາເປັນ ຜູ້ສືບທອດລວມແຕ່ລະຄົນ... ແທນ. 3. ສ່ວນວັກທີ 3 ຂອງມາດຕາ 35 ນັ້ນ ທີ່ໄດ້ກຳນົດວ່າ ໃນກໍລະນີທີ່ບໍ່ມີຜູ້ສືບທອດແລ້ວມູນມໍຣະດົກທັງໝົດກໍຈະຕົກທອດມາເປັນຂອງລັດເວັ້ນເສຍແຕ່ມູນມໍຣະດົກນັ້ນ ຫາກເປັນຂອງພິຊຸສາມະເນນຊຶ່ງໄດ້ບົ່ງໄວ້ໃນມາດຕາ 19 ຂອງກົດໝາຍວ່າດ້ວຍການສືບທອດມູນມໍຣະດົກ ແມ່ນຕັດອອກ ຍ້ອນວ່າ ໄດ້ກຳນົດໄວ້ພາກສະເພາະລະອຽດແລ້ວ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 898 ແລະ 985 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.

ມາດຕາອ້າງອີງ	ມາດຕາ 292,293,298,565,566,568 ແລະ 609 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນຫຼື ປະເພນີສານ	ສຳລັບການສືບທອດສິດນຳໃຊ້ທີ່ດິນ ພາຍຫຼັງທີ່ເຈົ້າມູນໄດ້ເສຍຊີວິດນັ້ນ, ຫົວຂໍ້ທີ່ຄວນຄົ້ນຄວ້າກໍຄື: ສິດນຳໃຊ້ທີ່ດິນຈະຖືກໂອນໄປໂດຍບໍ່ຕ້ອງມີການຂຶ້ນທະບຽນປ່ຽນຊື່ໃນໃບຕາດິນ ຫຼື ບໍ່. ມາດຕາທີ່ເປັນບ່ອນອີງໃນການຄົ້ນຄວ້າແມ່ນ ມາດຕາທີ່ກຳນົດກ່ຽວກັບ ການຂຶ້ນຂະບຽນປ່ຽນສິດນຳໃຊ້ທີ່ດິນ ໃນມາດຕາ 105 ກົດໝາຍວ່າດ້ວຍທີ່ດິນສະບັບປັບປຸງປີ 2019.

ມາດຕາ 300 ການໄດ້ຊັບສິ່ງຂອງທີ່ບໍ່ມີເຈົ້າຂອງ

ຊັບສິ່ງຂອງທີ່ບໍ່ມີເຈົ້າຂອງແມ່ນຊັບສິ່ງຂອງທີ່ເຈົ້າກຳມະສິດໄດ້ສະລະກຳມະສິດຢ່າງເປີດເຜີຍ.

ບຸກຄົນໃດ ຫາກໄດ້ເອົາຊັບສິ່ງຂອງນັ້ນມາຄອບຄອງເພື່ອຜົນປະໂຫຍດຂອງຕົນກໍໄດ້ມາເປັນ ກຳມະສິດກ່ຽວກັບຊັບສິ່ງຂອງນັ້ນ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນ ກ່ຽວກັບວິທີການໄດ້ກຳມະສິດຕໍ່ຊັບສິ່ງຂອງທີ່ບໍ່ມີເຈົ້າຂອງ ເນື່ອງຈາກເຈົ້າກຳມະສິດໄດ້ສະລະກຳມະສິດ.
ຕົວຢ່າງ	**ກ** ໄດ້ຖິ້ມໝໍ້ຫຸງເຂົ້າຂອງຕົນໃສ່ສະຖານທີ່ ຫຼື ບ່ອນຖິ້ມຂີ້ເຫຍື້ອ. **ຂ** ໄດ້ພົບເຫັນ ແລະ ໄດ້ນຳມາຄອບຄອງເພື່ອຕົນເອງ. ດ້ວຍເຫດນີ້, **ຂ** ຈຶ່ງໄດ້ກາຍເປັນເຈົ້າກຳມະສິດໃນໝໍ້ຫຸງເຂົ້າດັ່ງກ່າວ.
ເຫດຜົນໃນການປັບປຸງ	ມາດຕານີ້ ປັບປຸງມາຈາກ ມາດຕາ 36, ວັກ 1 ຂອງກົດໝາຍວ່າດ້ວຍ ກຳມະສິດ ໄດ້ກຳນົດນິຍາມກ່ຽວກັບ ຊັບສິ່ງຂອງບໍ່ມີເຈົ້າຂອງວ່າ ຊັບສິ່ງຂອງທີ່ບໍ່ມີເຈົ້າຂອງ ແມ່ນຊັບສິ່ງຂອງທີ່ເຈົ້າກຳມະສິດໄດ້ຖອນສິດຄອບຄອງຊັບສິ່ງຂອງ ຫຼື ໄດ້ເສຍ ສິດຄອບຄອງຊັບສິ່ງຂອງນັ້ນ ຍ້ອນກຳນົດເວລາຂອງອາຍຸຄວາມ ໃນການຮ້ອງ ຟ້ອງໄດ້ໝົດໄປ ຫຼື ທີ່ບໍ່ຮູ້ແຈ້ງວ່າ ບຸກຄົນຜູ້ໃດເປັນເຈົ້າກຳມະສິດ ເຫັນວ່າ ບໍ່ສອດຄ່ອງ ເນື່ອງຈາກວ່າ: **ເຈົ້າກຳມະສິດໄດ້ຖອນສິດຄອບຄອງຊັບສິ່ງຂອງ:** ການຖອນສິດຄອບ ຄອງແມ່ນມາດຕະການຂອງລັດຕໍ່ເຈົ້າກຳມະສິດ, ໝາຍວ່າ ເຈົ້າກຳມະສິດ ບໍ່ສາ ມາດຖອນສິດຄອບຄອງຂອງຕົນໄດ້ດ້ວຍຕົນເອງ. **ເຈົ້າກຳມະສິດໄດ້ເສຍສິດຄອບຄອງຊັບສິ່ງຂອງນັ້ນ ຍ້ອນກຳນົດເວລາ ຂອງອາຍຸຄວາມໃນການຮ້ອງຟ້ອງໄດ້ໝົດໄປ:** ເມື່ອເຈົ້າກຳມະສິດ ຫາກ ບໍ່ທວງເອົາຊັບສິ່ງຂອງ ຂອງຕົນແລ້ວ ຜູ້ຄອບຄອງຊັບໂດຍບໍ່ຖືກຕ້ອງຕາມກົດ ໝາຍ ດ້ວຍຄວາມບໍລິສຸດໃຈ ກໍຈະໄດ້ກຳມະສິດຕາມມາດຕາ 42 ຂອງກົດໝາຍ ວ່າດ້ວຍກຳມະສິດ. **ບໍ່ຮູ້ແຈ້ງວ່າບຸກຄົນຜູ້ໃດເປັນເຈົ້າກຳມະສິດ:** ມີຄວາມໝາຍວ່າ ມີບຸກຄົນ ໃດໜຶ່ງເປັນເຈົ້າກຳມະສິດ, ຈຶ່ງເຫັນວ່າ ບໍ່ສອດຄ່ອງກັບຊັບສິ່ງຂອງບໍ່ມີເຈົ້າຂອງ. ມາດຕາ 36 ວັກ 2 ໄດ້ກຳນົດໄວ້ວ່າ ມີແຕ່ອົງການການເງິນເທົ່ານັ້ນ ຈຶ່ງມີສິດສະ ເໜີໃຫ້ສານຕັດສິນເອົາຊັບສິ່ງຂອງ ທີ່ບໍ່ມີເຈົ້າຂອງນັ້ນເປັນກຳມະສິດຂອງລັດ. ຖ້າວ່າຊັບສິ່ງຂອງຫາກເປັນຂອງຄອບຄົວສະມາຊິກສະຫະກອນ ທີ່ໄດ້ຖອນ ຫຼື ເສຍສິດນັ້ນ ຊັບສິ່ງຂອງດັ່ງກ່າວ ກໍຈະຕົກເປັນກຳມະສິດຂອງສະຫະກອນ ບ່ອນ ທີ່ຊັບສິ່ງຂອງນັ້ນຕັ້ງຢູ່ ເຫັນວ່າ ບໍ່ສອດຄ່ອງ ຍ້ອນວ່າ, ຊັບສິ່ງຂອງທີ່ບໍ່ມີເຈົ້າຂອງ ໃນເວລານັ້ນ ແມ່ນໝາຍເຖິງທີ່ດິນທີ່ພົນລະເມືອງລາວ ໄດ້ປະຖິ້ມ, ຈຶ່ງຈຳເປັນ ຕ້ອງໄດ້ຂຶ້ນບັນຊີເປັນຂອງລັດ. ແຕ່ໃນຄວາມເປັນຈິງແລ້ວທີ່ດິນແມ່ນກຳມະສິດ

	ຂອງລັດ, ຈຶ່ງບໍ່ແມ່ນຊັບສິ່ງຂອງທີ່ບໍ່ມີເຈົ້າຂອງ ໂດຍໄດ້ຕັດອອກທັງໝົດ ແລະ ກຳນົດວ່າ ບຸກຄົນໃດຫາກໄດ້ເອົາຊັບສິ່ງຂອງນັ້ນມາຄອບຄອງ ເພື່ອຜົນປະໂຫຍດຂອງຕົນ ກໍໄດ້ມາເປັນກຳມະສິດກ່ຽວກັບຊັບສິ່ງຂອງນັ້ນ
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ239 ວັກ 1 ຂອງປະມວນກົດໝາຍແພ່ງ ຍີ່ປຸ່ນ; ມາດຕາ 958 ແລະ 959 ຂອງປະມວນໝາຍແພ່ງ ເຢຍລະມັນ.
ມາດຕາອ້າງອີງ	ມາດຕາ 293 ແລະ 301 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 301 ການໄດ້ກຳມະສິດຍ້ອນການເກັບຊັບສິ່ງຂອງຕົກເຮ່ຍ

ຊັບສິ່ງຂອງຕົກເຮ່ຍ ແມ່ນ ຊັບສິ່ງຂອງທີ່ເຈົ້າຂອງເຮັດຕົກເຮ່ຍ.

ຜູ້ເກັບຊັບສິ່ງຂອງຕົກເຮ່ຍມີພັນທະແຈ້ງໃຫ້ບຸກຄົນທີ່ໄດ້ເຮັດຊັບສິ່ງຂອງຕົກເຮ່ຍນັ້ນຊາບໃນທັນທີ,ຖ້າຫາກຮູ້ຕົວບຸກຄົນນັ້ນກໍໃຫ້ສົ່ງຊັບສິ່ງຂອງທີ່ເກັບໄດ້ນັ້ນຄືນໃຫ້ຜູ້ກ່ຽວຫຼືແຈ້ງແລະມອບຊັບສິ່ງຂອງຕົກເຮ່ຍໃຫ້ເຈົ້າໜ້າທີ່ຕຳຫຼວດ, ນາຍບ້ານຫຼືການຈັດຕັ້ງອື່ນທີ່ກ່ຽວຂ້ອງຮັກສາໄວ້ຖ້າຊັບສິ່ງຂອງຕົກເຮ່ຍນັ້ນຫາກເກັບໄດ້ຢູ່ໃນຂົງເຂດຮັບຜິດຊອບຂອງການຈັດຕັ້ງເພື່ອແຈ້ງໃຫ້ເຈົ້າຂອງຊັບສິ່ງຂອງມາຮັບເອົາ.

ໃນກໍລະນີຫາກບໍ່ຮູ້ໄດ້ວ່າບຸກຄົນໃດເປັນເຈົ້າຂອງ ຜູ້ທີ່ເກັບຊັບສິ່ງຂອງຕົກເຮ່ຍກໍມີພັນທະແຈ້ງ ແລະ ມອບຊັບສິ່ງຂອງຕົກເຮ່ຍໃຫ້ເຈົ້າໜ້າທີ່ຕຳຫຼວດ, ນາຍບ້ານຫຼືການຈັດຕັ້ງອື່ນເພື່ອປະກາດຫາເຈົ້າຂອງຊັບສິ່ງຂອງມາຮັບເອົາ.

ຖ້າຫາກມີຄວາມຫຍຸ້ງຍາກໃນການຮັກສາຫຼືຊັບສິ່ງຂອງນັ້ນອາດຈະເສື່ອມຄຸນນະພາບ, ເປ່ເພ ເສຍຫາຍ ແລະ ອື່ນໆ ເຈົ້າໜ້າທີ່ຕຳຫຼວດ, ນາຍບ້ານຫຼືການຈັດຕັ້ງອື່ນອາດຂາຍຊັບສິ່ງຂອງນັ້ນກໍໄດ້ພາຍຫຼັງທີ່ໄດ້ແຈ້ງຫຼືປະກາດແລ້ວແຕ່ກໍຕ້ອງຮັກສາເງິນທີ່ຂາຍນັ້ນໄວ້ໃຫ້ເຈົ້າຂອງຊັບສິ່ງຂອງດັ່ງກ່າວ.

ໃນກໍລະນີເຈົ້າກຳມະສິດ ຫາກມາຮັບເອົາຊັບສິ່ງຂອງດັ່ງກ່າວພາຍໃນເວລາ ສາມເດືອນ ນັບແຕ່ວັນປະກາດເປັນຕົ້ນໄປ ກໍໃຫ້ສົ່ງວັດຖຸດັ່ງກ່າວຄືນໃຫ້ຜູ້ກ່ຽວ.

ຖ້າຜູ້ເປັນເຈົ້າຂອງ ຫາກບໍ່ທວງເອົາຄືນພາຍໃນເວລາສາມເດືອນ, ຜູ້ເກັບຊັບສິ່ງຂອງຕົກເຮ່ຍ ກໍໄດ້ກຳມະສິດກ່ຽວກັບຊັບສິ່ງຂອງນັ້ນ. ໃນກໍລະນີທີ່ຜູ້ເກັບໄດ້ ຫາກປະຕິເສດບໍ່ຮັບເອົາຊັບສິ່ງຂອງນັ້ນ, ຊັບສິ່ງຂອງດັ່ງກ່າວ ກໍຈະຕົກເປັນກຳມະສິດຂອງລັດ.

ໃນກໍລະນີຜູ້ເກັບຊັບສິ່ງຂອງທີ່ຕົກເຮ່ຍຫາກບໍ່ໄດ້ແຈ້ງຊັບສິ່ງຂອງດັ່ງກ່າວ ຈະບໍ່ຕົກເປັນກຳມະສິດຂອງຜູ້ກ່ຽວແຕ່ຢ່າງໃດ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ນິຍາມ ຂອງຊັບສິ່ງຂອງຕົກເຮ່ຍການ ໄດ້ກຳມະສິດ ກ່ຽວກັບການເກັບຊັບສິ່ງຂອງຕົກເຮ່ຍ ທີ່ເຈົ້າຂອງບໍ່ມາຮັບເອົາ ກຳມະສິດດັ່ງກ່າວ ກໍຈະກາຍມາເປັນຂອງຜູ້ເກັບຊັບນັ້ນ.
ຕົວຢ່າງ	**1. ກ** ເກັບໄດ້ໂທລະສັບໜ່ວຍໜຶ່ງຕົກເຮ່ຍ ຊຶ່ງບໍ່ຮູ້ວ່າໃຜເປັນເຈົ້າຂອງ ມື້ຕໍ່ມາ **ກ** ຈຶ່ງໄດ້ນຳເອົາໂທລະສັບໜ່ວຍນັ້ນໄປແຈ້ງໃຫ້ເຈົ້າໜ້າທີ່ຕຳຫຼວດ ຫຼື ການຈັດຕັ້ງບ້ານເພື່ອແຈ້ງໃຫ້ ເຈົ້າຂອງມາຮັບເອົາ. **2. ກ** ພົບເຫັນ ຖົງປາເຮ່ຍ ໂດຍບໍ່ຮູ້ວ່າ ຜູ້ໃດເປັນເຈົ້າຂອງ ດັ່ງນັ້ນ **ກ** ຈຶ່ງໄດ້ນຳເອົາຖົງປາ ດັ່ງກ່າວໄປແຈ້ງໃຫ້ນາຍບ້ານ, ເມື່ອເຫັນວ່າ ປາເປັນຊັບສິ່ງຂອງທີ່ຈະເນົ່າໄວ້ ນາຍບ້ານ ແລະ **ກ** ຈຶ່ງໄດ້ຕີລາຄາຂາຍປາທີ່ຕົກເຮ່ຍນັ້ນ ແລ້ວໄດ້ມອບເງິນທີ່ໄດ້ມາຈາກການຂາຍນັ້ນ ໃຫ້ **ກ** ເກັບຮັກເພື່ອລໍຖ້າເຈົ້າຂອງມາຮັບເອົາ. ໃນກໍລະນີ ເຈົ້າຂອງຫາກບໍ່ມາຮັບເອົາເງິນ ພາຍໃນກຳນົດເວລາສາມເດືອນ ນັບແຕ່ວັນປະກາດເປັນຕົ້ນໄປ ເງິນຈຳນວນນັ້ນ ກໍຈະເປັນກຳມະສິດຂອງ **ກ.**

	3. ກ ພົບເຫັນກະເປົ๋າເງິນໂດຍທີ່ **ກ** ບໍ່ຮູ້ວ່າກະເປົ່ານີ້ເປັນຂອງໃຜ, ຕໍ່ມາ **ກ** ໄດ້ນຳໄປແຈ້ງນາຍບ້ານ ຫຼື ເຈົ້າໜ້າທີ່ຕຳຫຼວດ ເພື່ອປະກາດຫາເຈົ້າຂອງມາຮັບເອົາ ໂດຍທີ່ຕົນຮັກສາກະເປົ๋າໄວ້ ຫຼື ມອບກະເປົ๋າໃຫ້ ການຈັດຕັ້ງ ຮັກສາໄວ້ກໍໄດ້. ໃນກໍລະນີ ເຈົ້າຂອງ ຫາກບໍ່ມາຮັບເອົາພາຍໃນກຳນົດເວລາສາມເດືອນນັ້ນ **ກ** ກໍຈະໄດ້ກຳມະສິດ ແຕ່ຖ້າວ່າ **ກ** ຫາກປະຕິເສດ ບໍ່ຮັບເອົາກະເປົ๋າເງິນນັ້ນກໍຈະຕົກເປັນກຳມະສິດຂອງລັດ. **4: ກ** ພົບເຫັນ ກະເປົ๋າເງິນເຮ່ຍໂດຍບໍ່ໄດ້ແຈ້ງໃຫ້ການຈັດຕັ້ງບ້ານ ແລະ ເຈົ້າໜ້າທີ່ ເພື່ອປະກາດໃຫ້ເຈົ້າຂອງມາຮັບເອົາ. **ກ** ຈະບໍ່ໄດ້ກຳມະສິດກ່ຽວກັບກະເປົ๋າດັ່ງກ່າວ. (ການຄອງຄອງຊັບສິ່ງຂອງຂອງຜູ້ອື່ນ ໂດຍບໍ່ມີພື້ນຖານທາງດ້ານກົດໝາຍ).
ເຫດຜົນໃນການປັບປຸງ	ມາດຕານີ້ ປັບປຸງມາຈາກມາດຕາ 38 ກົດໝາຍກຳມະສິດ ບໍ່ໄດ້ກຳນົດນິຍາມ, ຈຶ່ງໄດ້ກຳນົດນິຍາມເຂົ້າໃໝ່. ມາດຕາ 38 ກົດໝາຍກຳມະສິດ ໄດ້ກຳນົດກ່ຽວ ກັບການມອບຊັບສິ່ງຂອງຕົກເຮ່ຍໃຫ້ຄະນະອຳນວຍການວິສາຫະກິດ ຫຼື ສຳນັກງານທີ່ກ່ຽວຂ້ອງຮັກສາໄວ້ ເຫັນວ່າ ບໍ່ສອດຄ່ອງ ເນື່ອງຈາກວ່າ ມັນບໍ່ເປັນຄຳສັບລວມສຳລັບການຈັດຕັ້ງ ຈຶ່ງປັບປຸງມາເປັນການຈັດຕັ້ງອື່ນທີ່ກ່ຽວຂ້ອງແທນ. ກຳນົດເວລາ, ໄດ້ປັບປຸງຈາກ 6 ເດືອນ ມາເປັນ 3 ເດືອນເນື່ອງຈາກວ່າ 6 ເດືອນ ອາດດົນເກີນໄປ ຍ້ອນການສື່ສານໃນສະໄໝນີ້ ມີຄວາມວ່ອງໄວແລ້ວ, ໂດຍບໍ່ຈຳເປັນຕ້ອງດົນເຖິງ 6ເດືອນກໍໄດ້. ຊັບສິ່ງຂອງຕົກເຮ່ຍ ເຊື່ອມຄຸນ: ໄດ້ກຳນົດເຂົ້າຕື້ມ ຍ້ອນມາດຕາ 38 ບໍ່ໄດ້ກຳນົດ ຊຶ່ງເຫັນວ່າຈຳເປັນ ຕ້ອງໄດ້ກຳນົດໃສ່. ມາດຕາ 38 ກົດໝາຍກຳມະສິດ, ບໍ່ໄດ້ກຳນົດຜົນທາງດ້ານກຳມະສິດຂອງຊັບສິ່ງຂອງ ໃນກໍລະນີບໍ່ແຈ້ງຂອງຕົກເຮ່ຍວ່າ ຈະໄດ້ ຫຼື ບໍ່ໄດ້ກຳມະສິດ ຈຶ່ງກຳນົດເຂົ້າຕື້ມ ເນື່ອງຈາກວ່າ ມາດຕານີ້ ເວົ້າເຖິງການໄດ້ກຳມະສິດກ່ຽວກັບຂອງຕົກເຮ່ຍ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 965-973 ຂອງປະມວນກົດໝາຍແພ່ງເຢຍລະມັນ; ມາດຕາ 240 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ; ມາດຕາ 230 ຂອງປະມວນກົດໝາຍແພ່ງຫວຽດນາມປີ2015.
ມາດຕາອ້າງອີງ	ມາດຕາ 294,314 ແລະ 315 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 302 ຄ່າບຳເນັດຫຼືລາງວັນ ແລະ ການທົດແທນຄ່າໃຊ້ຈ່າຍກ່ຽວກັບຊັບສິ່ງຂອງຕົກເຮ່ຍ

ຜູ້ເກັບຊັບສິ່ງຂອງຕົກເຮ່ຍ ມີສິດໄດ້ຮັບຄ່າບຳເນັດ ຫຼື ລາງວັນ ບໍ່ໃຫ້ເກີນສິບຫ້າສ່ວນຮ້ອຍ ຂອງມູນຄ່າຂອງຊັບສິ່ງຂອງຕົກເຮ່ຍ ຈາກຜູ້ເປັນເຈົ້າຂອງ.

ໃນກໍລະນີທີ່ຜູ້ເກັບຊັບສິ່ງຂອງຕົກເຮ່ຍ ຫາກບໍ່ໄດ້ແຈ້ງໃນເວລາອັນຄວນ, ຜູ້ກ່ຽວກໍຈະບໍ່ໄດ້ຮັບຄ່າບຳເນັດ ຫຼື ລາງວັນແຕ່ຢ່າງໃດ,ເວັ້ນເສຍແຕ່ຜູ້ກ່ຽວຫາກມີເຫດຜົນ.

ຜູ້ເກັບຊັບສິ່ງຂອງຕົກເຮ່ຍ ແລະການຈັດຕັ້ງ ມີສິດໄດ້ຮັບການທົດແທນຄ່າໃຊ້ຈ່າຍໃນການຮັກສາຊັບສິ່ງຂອງດັ່ງກ່າວ ຈາກຜູ້ເປັນເຈົ້າຂອງເດີມຖ້າຫາກມີການໃຊ້ຈ່ายຈິງ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນ ກໍລະນີຜູ້ເກັບຊັບສິ່ງຂອງຕົກເຮ່ຍ ຫາກໄດ້ແຈ້ງແລ້ວເຈົ້າກຳມະສິດມາປະກົດຕົວ, ຜູ້ກ່ຽວຈະໄດ້ຮັບບຳເນັດ ຫຼື ລາງວັນຈາກເຈົ້າກຳມະສິດ, ລວມທັງສິດໃນການໄດ້ຮັບຄ່າທົດແທນຕໍ່ຄ່າໃຊ້ຈ່າຍ.
ຕົວຢ່າງ	**1. ກ** ເກັບໄດ້ໂທລະສັບໜ່ວຍໜຶ່ງຕົກເຮ່ຍ ຊຶ່ງບໍ່ຮູ້ວ່າໃຜເປັນເຈົ້າຂອງ ມື້ຕໍ່ມາ **ກ** ຈຶ່ງໄດ້ນຳເອົາໂທລະສັບໜ່ວຍນັ້ນໄປແຈ້ງໃຫ້ເຈົ້າໜ້າທີ່ຕຳຫຼວດ ຫຼື ການຈັດຕັ້ງບ້ານເພື່ອແຈ້ງໃຫ້ ເຈົ້າຂອງມາຮັບເອົາ, ຫຼັງຈາກນັ້ນໄດ້ສອງເດືອນຜ່ານໄປກໍໄດ້ມີ **ຂ** ມາສະແດງຕົນວ່າເປັນເຈົ້າຂອງໂທລະສັບພ້ອມດ້ວຍຫຼັກຖານກໍລະນີນີ້ **ກ** ຜູ້ເກັບມີສິດຂໍເອົາຄ່າປົກປັກຮັກສາ ຫຼື ລາງວັນນຳ **ຂ** ບໍ່ໃຫ້ເກີນ 15% ຂອງມູນຄ່າໂທລະສັບໜ່ວນນັ້ນ. **2.** ໃນກໍລະນີທີ່ **ກ** ບໍ່ແຈ້ງກ່ຽວກັບການພົບເຫັນໂທລະສັບທີ່ຕົກເຮ່ຍນັ້ນ ເມື່ອ **ຂ** ມາສະແດງຕົນວ່າເປັນເຈົ້າຂອງໂທລະສັບພ້ອມດ້ວຍຫຼັກຖານແລ້ວ **ກ** ຈະບໍ່ໄດ້ຮັບຄ່າບຳເນັດ ຫຼື ລາງວັນແຕ່ຢ່າງໃດແຕ່ໃນກໍລະນີທີ່ **ກ** ບໍ່ສາມາດແຈ້ງໃນທັນທີທັນໃດນັ້ນ ຍ້ອນ **ກ** ໄດ້ເກີດອຸບປະຕິເຫດ (ລົດລົ້ມ) ບາດເຈັບນອນໂຮງໝໍ ຈຶ່ງເປັນເຫດຜົນພາໃຫ້ **ກ** ບໍ່ສາມາດໄປແຈ້ງໃນເວລາອັນຄວນນັ້ນ **ກ** ກໍຈະໄດ້ຮັບຄ່າບຳເນັດ ຫຼື ລາງວັນນັ້ນ.
ເຫດຜົນໃນການປັບປຸງ	ມາດຕານີ້ ປັບປຸງມາຈາກ ມາດຕາ 39 ຂອງກົດໝາຍວ່າດ້ວຍກຳມະສິດ ປີ 1990 ຊຶ່ງປ່ຽນຊື່ມາດຕາ 39 ການທົດແທນຄ່າໃຊ້ໃຫ້ຜູ້ທີ່ເກັບຊັບສິ່ງຂອງຕົກເຮ່ຍມາເປັນ ຄ່າບຳເນັດ ຫຼື ລາງວັນ ແລະ ການທົດແທນຄ່າໃຊ້ຈ່າຍກ່ຽວກັບຊັບສິ່ງຂອງຕົກເຮ່ຍ ໃນມາດຕາ 302 ແລະ ປັບປຸງບາງຄຳສັບ ໃນມາດຕານີ້ໃຫ້ຊັດເຈນຂຶ້ນຕື່ມ. ວັກທີ 2 ຂອງມາດຕາ 302 ຍັງຕື່ມປະໂຫຍກว່າ ເວັ້ນເສຍແຕ່ຜູ້ກ່ຽວຫາກມີເຫດຜົນ ເພື່ອແກ້ໄຂບັນຫາຂອງຜູ້ທີ່ເກັບຊັບສິ່ງຂອງຕົກເຮ່ຍບໍ່ສາມາດແຈ້ງໃນເວລາອັນຄວນໄດ້. ນອກຈາກນີ້ ຍັງໄດ້ປັບປຸງວັກ 1 ຂອງ ມາດຕາ 39 ມາເປັນສຸດທ້າຍມາດຕາ 302 ຊຶ່ງໄດ້ຕັດປະໂຫຍກ ໃນກໍລະນີທີ່ຊັບສິ່ງຂອງຖືກຕົກເຮ່ຍນັ້ນ ຫາກໄດ້ມອບເປັນກຳມະສິດຂອງລັດແລ້ວ ກໍແມ່ນໃຫ້ອົງການຈັດຕັ້ງຂອງລັດທີ່ກ່ຽວຂ້ອງເປັນຜູ້ທົດແທນອອກ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 965 ແລະ 970 ຂອງປະມວນກົດໝາຍແພ່ງເຢຍລະມັນ.
ມາດຕາອ້າງອີງ	ມາດຕາ 293 ແລະ 301ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 303 ການໄດ້ສັດຂາດການຮັກສາ

ບຸກຄົນໃດທີ່ໄດ້ຈັບສັດຂາດການຮັກສາ ຫຼື ສັດທີ່ປະປ່ອຍ, ບຸກຄົນນັ້ນ ຕ້ອງແຈ້ງໃຫ້ເຈົ້າຂອງສັດໃນທັນທີ ຖ້າຮູ້ເຈົ້າຂອງ ແລະ ສົ່ງສັດຄືນໃຫ້ຜູ້ກ່ຽວ, ຖ້າຫາກບໍ່ຮູ້ເຈົ້າຂອງຕ້ອງແຈ້ງໃຫ້ເຈົ້າໜ້າທີ່ຕຳຫຼວດ ຫຼື ນາຍບ້ານພາຍໃນເວລາ ສາມວັນ ນັບແຕ່ວັນທີ່ຈັບສັດນັ້ນໄດ້ເປັນຕົ້ນໄປ ເພື່ອປະກາດຫາເຈົ້າຂອງສັດ.

ຖ້າເຈົ້າຂອງສັດຫາກຍັງບໍ່ທັນໄດ້ທວງທາວເອົາແລ້ວ ສັດດັ່ງກ່າວກໍຈະມອບໃຫ້ຜູ້ຈັບໄດ້ນັ້ນ ເປັນຜູ້ຮັກສາ, ລ້ຽງເກືອ ແລະ ນຳໃຊ້. ໃນກໍລະນີທີ່ໄດ້ພົບເຫັນເຈົ້າຂອງສັດພາຍໃນເວລາ ສາມເດືອນ ນັບແຕ່ວັນປະກາດເປັນຕົ້ນໄປ ສັດນັ້ນກໍຈະໄດ້ສົ່ງຄືນໃຫ້ເຈົ້າຂອງ, ແຕ່ຜູ້ກ່ຽວ ຕ້ອງທົດແທນຄ່າໃຊ້ຈ່າຍໃນການລ້ຽງເກືອສັດ ແລະ ໃຫ້ລາງວັນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 302 ຂອງປະມວນກົດໝາຍສະບັບນີ້.

ຖ້າຜູ້ຈັບສັດທີ່ໄດ້ຮັກສາສັດນັ້ນ ຫາກມີຄວາມຫຍຸ້ງຍາກໃນການຮັກສາຫຼືລ້ຽງເກືອຫຼືມີການເລີ່ມເກີດພາຍຸສັດແລ້ວຜູ້ຈັບສັດໄດ້ນັ້ນອາດຂາຍສັດນັ້ນກໍໄດ້ ພາຍຫຼັງທີ່ໄດ້ແຈ້ງແລະໄດ້ຮັບຄວາມເຫັນດີຈາກເຈົ້າໜ້າທີ່ຕຳຫຼວດຫຼືນາຍບ້ານແລ້ວແຕ່ກໍຕ້ອງຮັກສາເງິນທີ່ຂາຍນັ້ນໄວ້ໃຫ້ເຈົ້າຂອງສັດດັ່ງກ່າວ.

ໃນກໍລະນີທີ່ບໍ່ພົບເຫັນເຈົ້າຂອງສັດ ພາຍໃນເວລາ ສາມເດືອນແລ້ວຜູ້ຈັບສັດໄດ້ນັ້ນກໍໄດ້ເປັນເຈົ້າກຳມະສິດສັດດັ່ງກ່າວ.

ຈຸດປະສົງ	ເພື່ອກຳນົດການໄດ້ກຳມະສິດ ກ່ຽວກັບສັດທີ່ປະປ່ອຍ, ຂາດການຮັກສາ ເມື່ອສັດເຂົ້າໄປທຳລາຍຊັບສິ່ງຂອງບຸກຄົນອື່ນ ໃນເມື່ອເຈົ້າຂອງຊັບຫາກຈັບໄວ້ ແລະໄປແຈ້ງຕໍ່ເຈົ້າໜ້າທີ່ ຫຼື ນາຍບ້ານ ປະກາດຫາເຈົ້າຂອງ ຫາກເຈົ້າຂອງບໍ່ມາຮັບເອົາ ກຳນົດເວລາສາມເດືອນ ຜູ້ຮັກສາສັດກໍຈະໄດ້ກຳມະສິດສັດນັ້ນ
ຕົວຢ່າງ	**1. ກ** ຈັບໄດ້ ງົວທີ່ມາເຂົ້າສວນຂອງຕົນ ຊຶ່ງ **ກ** ຮູ້ດີວ່າ ງົວໂຕນັ້ນແມ່ນ ເປັນ ງົວຂອງ **ຂ** ແລ້ວ **ກ** ຈຶ່ງໄດ້ຕິດຕໍ່ຫາ **ຂ** ເພື່ອໃຫ້ມາຮັບເອົາ. **2. ກ** ຈັບໄດ້ ງົວທີ່ມາເຂົ້າສວນຂອງຕົນ ຊຶ່ງ **ກ** ເອງກໍບໍ່ຮູ້ວ່າ ງົວໂຕນັ້ນເຈົ້າຂອງແມ່ນໃຜ ຫຼັງຈາກນັ້ນ, **ກ** ໄດ້ໄປແຈ້ງໃຫ້ນາຍບ້ານ ຫຼື ເຈົ້າໜ້າທີ່ຕຳຫຼວດ ພາຍໃນສາມວັນ ເພື່ອປະກາດຫາເຈົ້າຂອງມາຮັບເອົາພາຍໃນກຳນົດເວລາສາມເດືອນ ພາຍຫຼັງທີ່ໄດ້ແຈ້ງແລ້ວ ພະນັກງານຫ້ອງການບ້ານໄດ້ມອບງົວໂຕດັ່ງກ່າວຄືນໃຫ້ **ກ** ເປັນຜູ້ລ້ຽງເກືອ, ຮັກສາງົວໄວ້,ຖ້າວ່າ ເຈົ້າຂອງສັດມາຮັບເອົາ **ກ** ຕ້ອງມອບງົວໃຫ້ຜູ້ກ່ຽວ ແຕ່ **ກ** ມີສິດທວງເອົາຄ່າຮັກສາ, ລ້ຽງເກືອນຳເຈົ້າຂອງງົວ. **3. ກ** ຈັບໄດ້ ງົວທີ່ມາເຂົ້າສວນຂອງຕົນ ຊຶ່ງ **ກ** ເອງກໍບໍ່ຮູ້ວ່າ ງົວໂຕນັ້ນເຈົ້າຂອງແມ່ນໃຜ ຫຼັງຈາກນັ້ນ, **ກ** ໄດ້ໄປແຈ້ງໃຫ້ນາຍບ້ານ ຫຼື ເຈົ້າໜ້າທີ່ພາຍໃນສາມວັນ ເພື່ອປະກາດຫາເຈົ້າຂອງມາຮັບເອົາ ແລ້ວພະນັກງານຫ້ອງການບ້ານໄດ້ມອບງົວໂຕດັ່ງກ່າວໃຫ້ **ກ** ເປັນຜູ້ລ້ຽງ, ຮັກສາງົວໄວ້ແຕ່ **ກ** ມີຄວາມຫຍຸ້ງຍາກໃນການຮັກສາ ຫຼື ມີພະຍຸສັດ **ກ** ຈຶ່ງໄດ້ໄປແຈ້ງ ໃຫ້ພະນັກງານຫ້ອງການບ້ານເພື່ອເຫັນດີ ຂາຍງົວໂຕດັ່ງກ່າວ ແລ້ວຮັກສາເງິນໄວ້ ຖ້າວ່າພາຍໃນກຳນົດເວລາສາມເດືອນເຈົ້າຂອງງົວບໍ່ມາຮັບເອົາ **ກ** ກໍຈະໄດ້ກຳມະສິດກ່ຽວກັບເງິນທີ່ໄດ້ມາຈາກການຂາຍງົວນັ້ນ.
ເຫດຜົນໃນການປັບປຸງ	ມາດຕານີ້ ປັບປຸງມາຈາກມາດຕາ 40 ຂອງກົດໝາຍວ່າດ້ວຍ ກຳມະສິດ ປີ 1990 ໄດ້ກຳນົດເວລາໃນການທວງເອົາສັດຄືນ ຫົກເດືອນ ເຫັນວ່າ ຍາວເກີນໄປ ເນື່ອງຈາກການສື່ສານໃນຍຸກນີ້ ມີຄວາມສະດວກສະບາຍກວ່າໃນເມື່ອກົດໝາຍອອກ ໃນປີ 1990 ຈຶ່ງເປັນກຳນົດເວລາ ຈາກຫົກເດືອນມາເປັນສາມເດືອນ ແລະ ໄດ້ກຳນົດກ່ຽວກັບການເສຍກຳມະສິດຂອງເຈົ້າຂອງສັດ ພາຍຫຼັງກຳນົດເວລາຫົກເດືອນຜ່ານໄປ ໂດຍຜູ້ກ່ຽວບໍ່ມາຮັບເອົາສັດຄືນ, ເຫັນວ່າ ບໍ່ຈະແຈ້ງກ່ຽວກັບຈຸດທີ່ວ່າ ໃຜຈະໄດ້ກຳມະສິດ ຈຶ່ງໄດ້ປັບປຸງໃຫ້ແຈ້ງຕື່ມ ໂດຍໄດ້ກຳນົດໃຫ້ຜູ້ຈັບສັດ ໄດ້ກຳມະສິດ. ມາດຕາ 303 ເວົ້າເຖິງສັດລ້ຽງ ທີ່ຂາດການຮັກສາ ທີ່ຜູ້ເປັນເຈົ້າຂອງບໍ່ໄດ້ເອົາໃຈໃສ່ລ້ຽງ ດ້ວຍການກັກສັດໄວ້ບ່ອນລ້ຽງສັດໃດໜຶ່ງ. ໃນສະພາບຕົວຈິງຢູ່ ສປປ ລາວ ມີຫຼາຍທ້ອງຖິ່ນ ຫຼາຍເຂດຍັງລ້ຽງສັດ ແບບປ່ອຍທຳມະຊາດ ໂດຍບໍ່ໄດ້ກັກຂັງ ມາດຕານີ້ ບໍ່ກວມເອົາ ສັດນ້ຳ ແລະ ສັດປ່າ ຕາມທີ່ກົດໝາຍກຳນົດໄວ້ໃນກົດໝາຍ ວ່າດ້ວຍ ສັດນ້ຳ ແລະ ສັດປ່າ ຊຶ່ງບາງຊະນິດ ຫ້າມລ່າ, ຫ້າມລ້ຽງ ແລະ ຫ້າມຊື້ຂາຍ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 960 ຂອງປະມວນກົດໝາຍແພ່ງ ເຢຍລະມັນ; ມາດຕາ 231 ແລະ 232 ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2015.
ມາດຕາອ້າງອີງ	ມາດຕາ 293 ແລະ 315 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 304 ການໄດ້ກຳມະສິດຍ້ອນການພົບເຫັນວັດຖຸທີ່ມີຄ່າ

ວັດຖຸມີຄ່າມີຄຳ, ເງິນ ຫຼື ໂລຫະ, ແຮ່ທາດທີ່ມີຄ່າ ແລະ ວັດຖຸອື່ນໆຊຶ່ງເຊື່ອງຊ້ອນຫຼືຝັງໄວ້ຢູ່ໃນພື້ນດິນ, ໃນພື້ນນ້ຳ ຫຼື ຖືກຊຸກເຊື່ອງໄວ້ດ້ວຍວິທີໃດວິທີໜຶ່ງຊຶ່ງບໍ່ອາດກຳນົດໄດ້ວ່າບຸກຄົນຜູ້ໃດເປັນເຈົ້າກຳມະສິດ, ເວັ້ນເສຍແຕ່ວັດຖຸບູຮານ, ວັດຖຸທີ່ມີຄ່າທາງດ້ານວັດທະນະທຳ, ປະຫວັດສາດ ຫຼື ທຳມະຊາດທີ່ເປັນຊັບສົມບັດອັນລ້ຳຄ່າ, ເປັນມໍຣະດົກ ຂອງຊາດນັ້ນ ຊຶ່ງເປັນກຳມະສິດລວມຂອງວົງຄະນະຍາດແຫ່ງຊາດ.

ຜູ້ທີ່ພົບເຫັນວັດຖຸມີຄ່າ ບໍ່ວ່າຢູ່ໃນສະຖານທີ່ໃດກໍຕາມມີພັນທະແຈ້ງ ແລະ ມອບວັດຖຸມີຄ່ານັ້ນໃຫ້ນາຍບ້ານຫຼືເຈົ້າໜ້າທີ່ຕຳຫຼວດເພື່ອປະກາດຫາເຈົ້າຂອງໃຫ້ມາຮັບເອົາ. ຖ້າຫາກມີຄວາມຫຍຸ້ງຍາກໃນການເຄື່ອນຍ້າຍວັດຖຸມີຄ່ານັ້ນຜູ້ພົບເຫັນຈະຮັກສາໄວ້ກໍໄດ້.

ໃນກໍລະນີເຈົ້າກຳມະສິດຫາກມາຮັບເອົາພາຍໃນເວລາສາມເດືອນນັບແຕ່ວັນໄດ້ປະກາດເປັນຕົ້ນໄປກໍຕ້ອງສົ່ງຄືນໃຫ້ເຈົ້າກຳມະສິດນັ້ນ.

ຖ້າຜູ້ເປັນເຈົ້າຂອງຫາກບໍ່ທວງເອົາຄືນພາຍໃນເວລາດັ່ງກ່າວຜູ້ພົບເຫັນກໍຈະໄດ້ກຳມະສິດກ່ຽວກັບວັດຖຸນັ້ນ. ຖ້າຜູ້ພົບເຫັນຫາກບໍ່ຮັບເອົາວັດຖຸດັ່ງກ່າວ ກໍຈະຕົກເປັນກຳມະສິດຂອງລັດ.

ໃນກໍລະນີຜູ້ພົບເຫັນ ຫາກບໍ່ແມ່ນເຈົ້າຂອງທີ່ດິນບ່ອນພົບວັດຖຸນັ້ນ ຊຶ່ງເຈົ້າຂອງບໍ່ໄດ້ມາຮັບເອົາພາຍໃນເວລາທີ່ກ່າວໄວ້ເທິງນີ້ ວັດຖຸດັ່ງກ່າວກໍຈະຕົກເປັນກຳມະສິດຂອງຜູ້ພົບເຫັນ ແລະ ເຈົ້າຂອງທີ່ດິນຄົນລະເຄິ່ງ.

ໃນກໍລະນີຜູ້ພົບເຫັນຫາກບໍ່ໄດ້ແຈ້ງກ່ຽວກັບການພົບເຫັນຜູ້ກ່ຽວກໍຈະບໍ່ໄດ້ກຳມະສິດໃນວັດຖຸສິ່ງຂອງນັ້ນແຕ່ຢ່າງໃດ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ການໄດ້ກຳມະສິດ ກ່ຽວກັບກໍລະນີພົບເຫັນຊັບສິ່ງຂອງມີຄ່າ.
ຕົວຢ່າງ	**ກ, ຂ** ແລະ **ຄ** ເປັນນາຍຊ່າງກໍ່ສ້າງເຮືອນຂອງ **ງ** ໄດ້ພົບເຫັນໄຫເງິນຮາງ 15 ຮາງຝັງໄວ້ໃນດິນບ່ອນທີ່ກໍ່ສ້າງ ໂດຍບໍ່ຮູ້ວ່າໃຜເປັນເຈົ້າຂອງ, ພວກກ່ຽວໄດ້ໄປແຈ້ງນາຍບ້ານປະກາດຫາເຈົ້າຂອງເງິນຮາງດັ່ງກ່າວ ເພື່ອມາຮັບເອົາພາຍໃນກຳນົດເວລາສາມເດືອນ, ກໍລະນີນາຍບ້ານ ຫຼື ເຈົ້າໜ້າທີ່ຕຳຫຼວດມີຄວາມຫຍຸ້ງຍາກໃນການຮັກສາວັດຖຸມີຄ່າທີ່ພົບເຫັນນັ້ນກໍຈະມອບໃຫ້ **ກ, ຂ, ຄ** ແລະ **ງ** ເປັນຜູ້ເກັບຮັກສາໄວ້ຈົນເຖິງເວລາສາມເດືອນ, ເມື່ອສາມເດືອນຜ່ານໄປ ບໍ່ມີບຸກຄົນໄດ້ມາສະແດງຕົນເປັນເຈົ້າຂອງພ້ອມດ້ວຍຫຼັກຖານແລ້ວ ເງິນຈຳນວນດັ່ງກ່າວ ກໍຈະຕົກເປັນກຳມະສິດຂອງພະນັກງານກໍ່ສ້າງ **ກ, ຂ ຄ** ແລະ **ງ** ເຈົ້າຂອງທີ່ດິນ ຄົນລະເຄິ່ງ. ແຕ່ຖ້າພວກກ່ຽວ ຫາກບໍ່ໄດ້ແຈ້ງໃຫ້ນາຍບ້ານ ຫຼື ເຈົ້າໜ້າທີ່ຕຳຫຼວດຮູ້ ຫຼື ການຈັດຕັ້ງ ກ່ຽວກັບໄຫເງິນນັ້ນ, ພວກກ່ຽວກໍຈະບໍ່ໄດ້ກຳມະສິດກ່ຽວກັບໄຫເງິນແຕ່ຢ່າງໃດ.
ເຫດຜົນໃນການປັບປຸງ	ມາດຕານີ້ ປັບປຸງມາຈາກມາດຕາ 41 ກົດໝາຍວ່າດ້ວຍກຳມະສິດ ປີ 1990 ໄດ້ກຳນົດ ຊື່ມາດຕາ ວ່າ **ການພົບພໍ້ວັດຖຸມີຄ່າ ຫຼື ວັດຖຸບູຮານ** ເຫັນວ່າ ມີລັກສະນະເຈາະຈົງໃສ່ວັດຖຸມີຄ່າ ທີ່ມີຄຸນຄ່າທາງດ້ານວັດທະນະທຳ ທີ່ເປັນກຳມະສິດຂອງລັດ ຫຼື ຕ້ອງເປັນຊັບສົ່ງຂອງ ຂອງລັດ ຈຶ່ງບໍ່ແທດເໝາະກັບເປົ້າໝາຍກຳມະສິດຂອງປະມວນກົດໝາຍແພ່ງ ທີ່ເລັງໃສ່ໃຫ້ບຸກຄົນ ໄດ້ກຳມະສິດກ່ຽວກັບຊັບສິ່ງຂອງມີຄ່າທີ່ພົບເຫັນ ຊຶ່ງບໍ່ນອນໃນກຳມະສິດຂອງລັດ. ສະນັ້ນ, ຈຶ່ງປ່ຽນຊື່ມາດຕາ ມາເປັນ ການພົບພໍ້ວັດຖຸມີຄ່າເທົ່ານັ້ນ.

	ໂດຍອີງຕາມຊື່ມາດຕາໃໝ່, ເນື້ອໃນວັກ 1 ຂອງມາດຕາ 41 ກົດໝາຍວ່າດ້ວຍກຳມະສິດ ກໍໄດ້ປັບປຸງ ເພື່ອກວມເອົາຊັບສິ່ງຂອງມີຄ່າ ທີ່ສາມາດເປັນກຳມະສິດຂອງບຸກຄົນໄດ້ເທົ່ານັ້ນ ໂດຍໄດ້ກຳນົດຕື່ມກ່ຽວກັບກຳນົດເວລາສາມເດືອນ ໃນການປະກາດຫາເຈົ້າຂອງ, ການສົ່ງຊັບສິ່ງຂອງຄືນໃຫ້ເຈົ້າຂອງເດີມ, ການໄດ້ກຳມະສິດຂອງຜູ້ພົບເຫັນ, ການສະລະການກຳມະສິດ, ການໄດ້ກຳມະສິດຕໍ່ ຊັບສິ່ງຂອງຂອງລັດ, ການບໍ່ໄດ້ກຳມະສິດຂອງຜູ້ພົບເຫັນໃນກໍລະນີຜູ້ກ່ຽວຫາກບໍ່ໄດ້ແຈ້ງພ້ອມກັນນັ້ນ, ກໍຕັດເອົາວັກສຸດທ້າຍກ່ຽວກັບເງິນລາງວັນຂອງການພົບເຫັນອອກເປັນມາດຕາຕ່າງຫາກ, ເພື່ອໃຫ້ເຂົ້າໃຈງ່າຍ ແລະ ສະດວກໃນການນຳໃຊ້.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 229,230 ແລະ 240 ຂອງປະມວນກົດໝາຍແພ່ງ ຫວຽດນາມ; ມາດຕາ 241 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ; ມາດຕາ 965-984 ຂອງປະມວນກົດໝາຍແພ່ງ ເຢຍລະມັນ.
ມາດຕາອ້າງອີງ	ມາດຕາ 301 ແລະ 305 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ305ຄ່າບຳເນັດຫຼືລາງວັນແລະການທົດແທນຄ່າໃຊ້ຈ່າຍກ່ຽວກັບການພົບເຫັນວັດຖຸມີຄ່າ

ຜູ້ພົບເຫັນວັດຖຸມີຄ່າມີສິດໄດ້ຮັບຄ່າບຳເນັດຫຼືລາງວັນ ບໍ່ເກີນສິບຫ້າສ່ວນຮ້ອຍຂອງມູນຄ່າຂອງວັດຖຸດັ່ງກ່າວຈາກຜູ້ເປັນເຈົ້າຂອງ ຫຼື ອົງການຈັດຕັ້ງລັດທີ່ກ່ຽວຂ້ອງ,ເວັ້ນເສຍແຕ່ການພົບເຫັນຫາກເປັນໜ້າທີ່ໂດຍກົງຂອງຜູ້ກ່ຽວເອງ.

ໃນກໍລະນີຜູ້ພົບເຫັນຫາກບໍ່ໄດ້ແຈ້ງໃນເວລາອັນຄວນແລ້ວ ຜູ້ກ່ຽວກໍຈະບໍ່ໄດ້ຮັບຄ່າບຳເນັດ ຫຼື ລາງວັນແຕ່ຢ່າງໃດ, ເວັ້ນເສຍແຕ່ຜູ້ກ່ຽວຫາກມີເຫດຜົນ.

ຜູ້ພົບເຫັນແລະການຈັດຕັ້ງມີສິດໄດ້ຮັບການທົດແທນຄ່າໃຊ້ຈ່າຍໃນການປົກປັກຮັກສາວັດຖຸດັ່ງກ່າວຈາກເຈົ້າຂອງ.

ຈຸດປະສົງ	ເພື່ອກຳນົດກ່ຽວກັບການໄດ້ ລາງວັນ ແລະ ການທົດແທນຄ່າໃຊ້ຈ່າຍໃນການປົກປັກຮັກສາຊັບສິ່ງຂອງທີ່ຜູ້ກ່ຽວໄດ້ພົບເຫັນ.
ຕົວຢ່າງ	**ກ** ໄດ້ພົບເຫັນໄຫເງິນຮາງ 100 ຮາງຊຶ່ງຝັງໄວ້ໃນດິນຂອງຕົນ ທີ່ມີການກໍ່ສ້າງ. **ກ** ໄດ້ໄປແຈ້ງນາຍບ້ານຂອງຕົນເພື່ອປະກາດຫາເຈົ້າຂອງເງິນດັ່ງກ່າວມາຮັບເອົາພາຍໃນກຳນົດເວລາສາມເດືອນ. ກໍລະນີນາຍບ້ານ ຫຼື ເຈົ້າໜ້າທີ່ຕຳຫຼວດຫຍຸ້ງຍາກໃນການຮັກສາວັດຖຸມີຄ່າທີ່ພົບເຫັນ ແລ້ວຈຶ່ງໄດ້ມອບໃຫ້ **ກ** ເກັບຮັກສາໄວ້, ໜຶ່ງເດືອນຕໍ່ມາ **ຂ** ໄດ້ແຈ້ງຕໍ່ນາຍບ້ານກ່ຽວກັບຄວາມເປັນມາຂອງໄຫເງິນວ່າ ຕົນໄດ້ຝັງເງິນນັ້ນໄວ້ໃນປາງສິງຄາມ ແລະ ຫຼົງລືມວ່າໄດ້ຝັງໄວ້ບ່ອນໃດ ແລະ ໄດ້ຂາຍທີ່ດິນນັ້ນ ໃຫ້ **ກ** ໃນເວລາຕໍ່ມາ. **ກ** ຈຶ່ງມອບເງິນຮາງ 100 ຮາງໃຫ້ **ຂ** ແຕ່ **ກ** ມີສິດຂໍໃຫ້ **ຂ** ຈ່າຍຄ່າຮັກສາ, ຄ່າບຳເນັດ ຫຼື ລາງວັນ ແລະ ການທົດແທນຄ່າໃຊ້ຈ່າຍກ່ຽວກັບການພົບເຫັນວັດຖຸມີຄ່ານັ້ນໃຫ້ **ກ** ບໍ່ເກີນ15% ຂອງມູນຄ່າເງິນຮາງ 100 ຮາງ ທີ່ພົບເຫັນນັ້ນ ໃຫ້ **ກ.** ແຕ່ຖ້າວ່າ **ກ** ຫາກບໍ່ໄດ້ແຈ້ງ,ແລ້ວ **ຂ** ມາສະແດງຕົນວ່າເປັນເຈົ້າຂອງພ້ອມດ້ວຍຫຼັກຖານມາອ້າງອີງແລ້ວ **ກ** ຕ້ອງມອບເງິນຮາງ ຈຳນວນ 100 ຮາງດັ່ງກ່າວຄືນໃຫ້ **ຂ** ແລະ **ກ** ຈະບໍ່ໄດ້ຮັບຄ່າບຳເນັດ ຫຼື ລາງວັນ ແລະ ການທົດແທນຄ່າໃຊ້ຈ່າຍກ່ຽວກັບການພົບເຫັນວັດຖຸມີຄ່ານັ້ນແຕ່ຢ່າງໃດ.

ເຫດຜົນໃນການປັບປຸງ	ມາດຕານີ້ ປັບປຸງມາຈາກມາດຕາ 41 ກົດໝາຍວ່າດ້ວຍ ກຳມະສິດ ປີ 1990 ໄດ້ກຳນົດ ການພົບວັດຖຸມີຄ່າ ແລະ ຄ່າບຳເນັດໄວ້ນຳກັນ ເຫັນວ່າ ເນື້ອໃນ ແລະ ຫົວຂໍ້ມາດຕາ ບໍ່ກົງກັນ ຈຶ່ງແຍກເປັນສອງມາດຕາ ເພື່ອໃຫ້ເບິ່ງງ່າຍ ແລະ ສະດວກໃນການນຳໃຊ້.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 971 ຂອງປະມວນກົດໝາຍແພ່ງ ເຢຍລະມັນ; ມາດຕາ 229 ແລະ 230 ຂອງປະມວນກົດໝາຍແພ່ງຫວຽດນາມປີ2015.
ມາດຕາອ້າງອີງ	ມາດຕາ 302 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 306 ການໄດ້ກຳມະສິດຍ້ອນການໂຮມຊັບສິ່ງຂອງ

ການໂຮມຊັບສິ່ງຂອງ ແມ່ນການເອົາຊັບສິ່ງຂອງສອງອັນ ຫຼື ຫຼາຍອັນເຂົ້າກັນ ດ້ວຍການເຊື່ອມຕໍ່, ປະສົມ ຫຼື ປຸງແຕ່ງເປັນຊັບສິ່ງຂອງໃໝ່ອັນດຽວ.

ການໄດ້ກຳມະສິດຍ້ອນການໂຮມຊັບສິ່ງຂອງ ມີກໍລະນີດັ່ງນີ້:

1. ການເຊື່ອມຕໍ່ສັງຫາລິມະຊັບກັບ ອະສັງຫາລິມະຊັບ;
2. ການເຊື່ອມຕໍ່ອະສັງຫາລິມະຊັບເຂົ້າກັນ;
3. ການເຊື່ອມຕໍ່ສັງຫາລິມະຊັບດ້ວຍກັນ;
4. ການປະສົມສັງຫາລິມະຊັບເຂົ້າກັນ;
5. ການປຸງແຕ່ງ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນ ກ່ຽວກັບການໄດ້ກຳມະສິດ ໃນກໍລະນີທີ່ເຈົ້າກຳມະສິດຕ່າງກັນໄດ້ໂຮມເອົາຊັບສິ່ງຂອງ 2 ອັນເຂົ້າໃຫ້ເປັນຊັບໃໝ່ອັນດຽວທີ່ບໍ່ສາມາດແຍກອອກຈາກກັນໄດ້ອີກ (ກໍລະນີທີ່ແຍກກັນແລ້ວພາໃຫ້ເສຍຫາຍ, ຫຼືການແຍກກັນນັ້ນຕ້ອງໄດ້ໃຊ້ຄ່າໃຊ້ຈ່ຍທີ່ຫຼາຍເກີນຄວນ) ແລ້ວໃຫ້ເປັນກຳມະສິດຂອງຜູ້ໃດຜູ້ໜຶ່ງ. ຫຼືການເຮັດໃຫ້ເປັນຊັບທີ່ເປັນກຳມະສິດຮ່ວມຂອງທັງສອງເພື່ອຫຼີກລ່ຽງບໍ່ໃຫ້ທຳລາຍຊັບສິ່ງຂອງ ທີ່ຈະເປັນການສູນເສຍຜົນປະ�โຫຍດທາງສັງຄົມ.
ຕົວຢ່າງ	ຂໍ້ທີ 1 ຂອງມາດຕານີ້ສາມາດເບິ່ງຕົວຢ່າງ ມາດຕາ 307 ຂອງບົດອະທິບາຍປະມວນກົດໝາຍແພ່ງ; ຂໍ້ທີ 2 ຂອງມາດຕານີ້ສາມາດເບິ່ງຕົວຢ່າງມາດຕາ 308 ຂອງບົດອະທິບາຍປະມວນກົດໝາຍແພ່ງ; ຂໍ້ທີ 3 ຂອງມາດຕານີ້ສາມາດເບິ່ງຕົວຢ່າງມາດຕາ 309 ຂອງບົດອະທິບາຍປະມວນກົດໝາຍແພ່ງ; ຂໍ້ທີ 4 ຂອງມາດຕານີ້ສາມາດເບິ່ງຕົວຢ່າງມາດຕາ 310 ຂອງບົດອະທິບາຍປະມວນກົດໝາຍແພ່ງ; ຂໍ້ທີ 5 ຂອງມາດຕານີ້ສາມາດເບິ່ງຕົວຢ່າງມາດຕາ 311 ຂອງບົດອະທິບາຍປະມວນກົດໝາຍແພ່ງ;
ເຫດຜົນໃນການສ້າງໃໝ່	ມາດຕານີ້ ສ້າງຂຶ້ນໃໝ່ ເນື່ອງຈາກว່າ: ຂໍ້ຂັດແຍ່ງກ່ຽວກັບການໂຮມຊັບເຂົ້າກັນໃນປະເທດເຮົາຍັງມີລັກສະນະແຜ່ຫຼາຍ, ແຕ່ການແກ້ໄຂຂໍ້ຂັດແຍ່ງວ່າຊັບທີ່ເອົາມາໂຮມກັນນັ້ນຈະເປັນຂອງໃຜແລະຈະແກ້ໄຂແນວໃດເພື່ອໃຫ້ເປັນທີ່ຍອມຮັບໄດ້ຂອງທຸກຝ່າຍກົດໝາຍແພ່ງ ປະເທດເຮົາຍັງບໍ່ທັນກຳນົດໃສ່ໃຫ້ຈະແຈ້ງ ແລະ ເປັນເອກະພາບຈຶ່ງເຫັນວ່າມີຄວາມຈຳເປັນຕ້ອງໄດ້ກຳນົດມາດຕານີ້ເຂົ້າໃໝ່ ເພື່ອ

	ແກ້ໄຂບັນຫາດັ່ງກ່າວ. ພ້ອມກັນນັ້ນ ກໍກຳນົດຮູບການຂອງການໂອນຊັບສິ່ງຂອງ ແລ້ວອະທິບາຍໃນມາດຕາຕໍ່ໄປ ເພື່ອໃຫ້ສອດຄ່ອງກັບຫຼັກການ ຂອງການສ້າງ ກົດໝາຍ ຂອງປະເທດເຮົາ.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງຂອງປະເທດອື່ນ	ມາດຕາ 946- 952 ຂອງກົດໝາຍເຢຍລະມັນ; ມາດຕາ 242-248 ຂອງປະມວນກົດໝາຍແພ່ງ ຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 307-311 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 307 ການເຊື່ອມຕໍ່ສັງຫາລິມະຊັບກັບ ອະສັງຫາລິມະຊັບ

ການເຊື່ອມຕໍ່ສັງຫາລິມະຊັບກັບອະສັງຫາລິມະຊັບ ແມ່ນ ການເອົາສັງຫາລິມະຊັບ ເຊື່ອມກັບອະສັງ ຫາລິມະຊັບແລ້ວກາຍເປັນຊັບສິ່ງຂອງອັນດຽວ ໂດຍບໍ່ສາມາດຕັດແຍກອອກຈາກກັນໄດ້ ຈະຕົກເປັນກຳມະສິດ ຂອງເຈົ້າຂອງອະສັງຫາລິມະຊັບ,ເວັ້ນເສຍແຕ່ກົດໝາຍ ຫຼື ສັນຍາ ຫາກໄດ້ກຳນົດໄວ້ເປັນຢ່າງອື່ນ.

ຈຸດປະສົງ	ເພື່ອກຳນົດກ່ຽວກັບການໄດ້ກຳມະສິດ ກ່ຽວກັບສັງຫາລິມະຊັບ ທີ່ເອົາມາເຊື່ອມ ຕໍ່ກັບອະສັງຫາລິມະຊັບ
ຕົວຢ່າງ	**1. ກ** ໄດ້ເຊົ່າທີ່ດິນຂອງ **ຂ** ເພື່ອເຮັດສວນຜັກເປັນສິນຄ້າເປັນເວລາ ໜຶ່ງປີ ໃນໄລຍະເວລາທີ່ **ກ** ປູກຜັກນັ້ນ **ກ** ໄດ້ໄປຊື້ຕົ້ນໄມ້ດູ່ຈຳນວນ 10 ຕົ້ນມາປູກ ໃສ່ທີ່ດິນຂອງ **ຂ** ໂດຍທີ່ **ຂ** ເຈົ້າຂອງທີ່ດິນບໍ່ຮູ້, ພາຍຫຼັງໝົດສັນຍາເຊົ່າແລ້ວຕົ້ນ ໄມ້ ຈຳນວນ 10 ຕົ້ນນັ້ນກໍຈະຕົກເປັນກຳມະສິດຂອງ **ຂ** ເຈົ້າຂອງທີ່ດິນ. **2 ເວັ້ນເສຍແຕ່ກົດໝາຍ ຫຼື ສັນຍາ ຫາກໄດ້ກຳນົດໄວ້ເປັນຢ່າງອື່ນ.** **2.1 ຂໍ້ຍົກເວັ້ນຕາມກົດໝາຍ** **ກ** ແລະ **ຂ** ເປັນພີວເມຍກັນ ແຕ່ ຂ ມີທີ່ດິນໜຶ່ງຕອນເປັນຊັບເດີມ ຊຶ່ງ ທັງສອງໄດ້ມາປັບປຸງທີ່ດິນທີ່ເປັນໜອງ, ເປັນໂນນ ແລ້ວ ປຸກເຮືອນໃສ່ທີ່ ດິນຕອນດັ່ງກ່າວ ຊຶ່ງເຮັດໃຫ້ທີ່ດິນຕອນນັ້ນມີມູນຄ່າເພີ່ມຂຶ້ນ ຕໍ່ມາ ສອງຄົນໄດ້ ຢ່າຮ້າງ ຊຶ່ງເຫັນວ່າເຮືອນ ຫຼື ການສ້ອມແປງນັ້ນມີ ມູນຄ່າເກີນກວ່າສອງສ່ວນ ສາມ ຂອງມູນຄ່າທີ່ດິນ ທີ່ດິນ ທີ່ໄດ້ປັບປຸງນັ້ນຈະເປັນສິນສົມສ້າງຂອງ **ກ** ແລະ **ຂ** ແລະ ຕ້ອງແບ່ງກັນຄົນລະເຄິ່ງໃນເວລາຢ່າຮ້າງກັນ (ມາດຕາ 181 ປະມວນ ກົດໝາຍແພ່ງ). **2.2 ຂໍ້ຍົກເວັ້ນ ຕາມສັນຍາ**, **ກ** ໄດ້ເຊົ່າທີ່ດິນຂອງ **ຂ** ເພື່ອເຮັດສວນຜັກເປັນສິນຄ້າເປັນເວລາ ໜຶ່ງປີ ໃນໄລຍະເວລາທີ່ **ກ** ປູກຜັກກາດນັ້ນ **ກ** ໄດ້ໄປຊື້ຕົ້ນໄມ້ດູ່ຈຳນວນ 10 ຕົ້ນມາ ປູກໃສ່ທີ່ດິນຂອງ **ຂ** ໂດຍໄດ້ມີການຕົກລົງກັນລະຫວ່າງ **ກ** ແລະ **ຂ** ວ່າຕົ້ນໄມ້ ນັ້ນໃຫ້ເປັນຊັບຮ່ວມ,ພາຍຫຼັງໝົດສັນຍາເຊົ່າແລ້ວ ຕົ້ນໄມ້ ຈຳນວນ 10 ຕົ້ນນັ້ນ ກໍຈະຕົກເປັນກຳມະສິດຮ່ວມລະຫວ່າງ **ກ** ຜູ້ປູກ ແລະ **ຂ** ເຈົ້າຂອງທີ່ດິນ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງໃໝ່ ເນື່ອງຈາກວ່າ: ຂໍ້ຂັດແຍ່ງກ່ຽວກັບການເຊື່ອມຕໍ່ສັງຫາລິມະ ຊັບ ກັບ ອະສັງລິມະຊັບໃນແງ່ຂອງຄອບຄົວ ໃນປະເທດເຮົາ ຍັງມີລັກສະນະ ແຜ່ຫຼາຍ, ແຕ່ການແກ້ໄຂຂໍ້ຂັດແຍ່ງວ່າ ຊັບທີ່ເອົາມາໂອນກັນນັ້ນ ຈະເປັນຂອງ ໃຜ ແລະ ຈະແກ້ໄຂແນວໃດ ແມ່ນໄດ້ອີງໃສ່ ມາດຕາ 26 ຂອງກົດໝາຍວ່າ ດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ທີ່ເປັນຫຼັກການສະເພາະເຫັນ ວ່າ ຍັງບໍ່ທັນກຳນົດລະອຽດ. ເພື່ອໃຫ້ເປັນທີ່ຮັບໄດ້ ຂອງທຸກຝ່າຍ ແລະ ໃຫ້ ລະອຽດຕື່ມ ຈຶ່ງເຫັນວ່າ ມີຄວາມຈຳເປັນ ຕ້ອງໄດ້ກຳນົດໃໝ່.

ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 242 ຂອງປະມວນກົດໝາຍແພ່ງ ຍີ່ປຸ່ນ; ມາດຕາ 946 ຂອງປະມວນກົດໝາຍແພ່ງ ເຢຍລະມັນ; ມາດຕາ 225 ຂອງປະມວນກົດໝາຍແພ່ງຫວຽດນາມປີ 2015.
ມາດຕາອ້າງອີງ	ມາດຕາ 306 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 308 ການເຊື່ອມຕໍ່ອະສັງຫາລິມະຊັບເຂົ້າກັນ

ການເຊື່ອມຕໍ່ອະສັງຫາລິມະຊັບເຂົ້າກັນ ແມ່ນການເອົາອະສັງລິມະຊັບໜຶ່ງ ເຊື່ອມກັບອະສັງຫາລິມະຊັບອື່ນແລ້ວກາຍເປັນຊັບສິ່ງຂອງອັນດຽວໂດຍບໍ່ສາມາດຕັດແຍກອອກຈາກກັນໄດ້.

ກຳມະສິດຕໍ່ອະສັງຫາລິມະຊັບທີ່ເຊື່ອມເຂົ້າກັນນັ້ນ ຈະຕົກເປັນກຳມະສິດລວມຕາມພູດ ຫຼື ຕາມມູນຄ່າຂອງອະສັງຫາລິມະຊັບ ທີ່ເຈົ້າກຳມະສິດແຕ່ລະຄົນໄດ້ປະກອບໃສ່,ເວັ້ນເສຍແຕ່ຫາກໄດ້ຕົກລົງກັນໄວ້ເປັນຢ່າງອື່ນ.

ໃນກໍລະນີທີ່ບໍ່ສາມາດກຳນົດສັດສ່ວນດັ່ງກ່າວ ໃຫ້ຖືເປັນກຳມະສິດລວມທີ່ມີພູດສະເໝີກັນ.

ຈຸດປະສົງ	ເພື່ອກຳນົດໃຫ້ກ່ຽວກັບການ ໄດ້ກຳມະສິດຮ່ວມກັນ ກ່ຽວກັບອະສັງຫາລິມະຊັບທີ່ເອົາມາເຊື່ອມຕໍ່ກັນ
ຕົວຢ່າງ	**ກ** ແລະ **ຂ** ມີດິນ ແລະ ເຮືອນຢູ່ຕິດກັນ, **ກ** ແລະ **ຂ** ຈຶ່ງໄດ້ຕົກລົງກັນເອົາເຮືອນທັງ 2 ຫຼັງເຊື່ອມຕໍ່ເຂົ້າກັນເປັນອັນດຽວ. ທັງສອງຈະມີກຳມະສິດຮ່ວມກັນໃນເຮືອນດັ່ງກ່າວ ຊຶ່ງ **ກ** ແລະ **ຂ** ໄດ້ຕົກລົງກຳນົດເອົາພູດຂອງແຕ່ລະຄົນຕາມມູນຄ່າເຮືອນ ຫຼື ອາຄານຂອງໃຜມັນ, ແຕ່ຖ້າຫາກວ່າບໍ່ໄດ້ຕົກລົງກັນ ຫຼື ບໍ່ສາມາດຕົກລົງກັນໄດ້ນັ້ນ ແມ່ນ **ກ** ແລະ **ຂ** ຈະໄດ້ພູດທໍ່ກັນ (ຄົນລະ 1/2).
ເຫດຜົນໃນການສ້າງໃໝ່	ມາດຕານີ້ ສ້າງຂຶ້ນໃໝ່ ເນື່ອງຈາກວ່າ: ຂໍ້ຂັດແຍ່ງກ່ຽວກັບການເຊື່ອມຕໍ່ອະສັງຫາລະມະຊັບໃນປະເທດເຮົາ ຍັງມີລັກສະນະແຜ່ຫຼາຍ, ແຕ່ການແກ້ໄຂຂໍ້ຂັດແຍ່ງ ວ່າ ຊັບທີ່ເອົາມາໂຮມກັນນັ້ນ ຈະເປັນຂອງໃຜ ແລະ ຈະແກ້ໄຂແນວໃດ ແລະ ຍັງບໍ່ທັນມີຫຼັກການຂອງກົດໝາຍທີ່ເປັນເອກະພາບ ຊຶ່ງໃນໄລຍະຜ່ານມາແມ່ນອີງໃສ່ສັນຍາ ເປັນພື້ນຖານໃນການແກ້ໄຂ; ແຕ່ຖ້າຄູ່ກໍລະນີ ຫາກບໍ່ໄດ້ຕົກລົງກັນ ກໍມີຄວາມຫຍຸ້ງຍາກໃນການແກ້ໄຂ. ເພື່ອໃຫ້ເປັນທີ່ຮັບໄດ້ຂອງທຸກຝ່າຍ ແລະ ໃຫ້ຈະແຈ້ງຕື່ມ ຈຶ່ງເຫັນວ່າ ມີຄວາມຈຳເປັນ ຕ້ອງໄດ້ກຳນົດໃໝ່.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນຫຼື ປະເພນີສານ	ຜ່ານມາສານປະເທດຍີ່ປຸ່ນ ເຄີຍພິພາກສາກ່ຽວກັບບັນຫານີ້ ໂດຍບໍ່ທັນມີກົດໝາຍ ແລະ ຂໍ້ກຳນົດເປັນບ່ອນອີງທີ່ຈະແຈ້ງ.

ມາດຕາ 309 ການເຊື່ອມຕໍ່ສັງຫາລິມະຊັບເຂົ້າກັນ

ການເຊື່ອມຕໍ່ສັງຫາລິມະຊັບເຂົ້າກັນ ແມ່ນການນຳເອົາສັງຫາລິມະຊັບໃດໜຶ່ງ ເຊື່ອມຕໍ່ເຂົ້າກັບສັງຫາລິມະຊັບອື່ນ ແລ້ວກາຍເປັນສັງຫາລິມະຊັບດຽວ ຊຶ່ງບໍ່ສາມາດຕັດແຍກອອກຈາກກັນໄດ້.

ກຳມະສິດຕໍ່ສັງຫະລິມະຊັບທີ່ເຊື່ອມເຂົ້າກັນນັ້ນ ເປັນກຳມະສິດລວມຂອງເຈົ້າກຳມະສິດສັງຫາລິມະຊັບນັ້ນ ໂດຍຖືເອົາຕາມມູນຄ່າຂອງສັງຫາລິມະຊັບໃນເວລາເຊື່ອມຕໍ່ເຂົ້າກັນນັ້ນເປັນພື້ນຖານ.

ຖ້າສັງຫາລິມະຊັບໃດຫາກເປັນພື້ນຖານຕົ້ນຕໍກວ່າສັງຫາລິມະຊັບອື່ນເຈົ້າກຳມະສິດຕໍ່ຊັບພື້ນຖານຕົ້ນຕໍນັ້ນກໍຈະເປັນເຈົ້າກຳມະສິດແຕ່ພຽງຜູ້ດຽວໃນຊັບສິ່ງຂອງໃໝ່ນັ້ນ, ເວັ້ນເສຍແຕ່ຫາກໄດ້ຕົກລົງກັນໄວ້ເປັນຢ່າງອື່ນ.

ຈຸດປະສົງ	ເພື່ອກຳນົດກ່ຽວກັບການໄດ້ກຳມະສິດຮ່ວມກັນ ກ່ຽວກັບສັງຫາລິມະຊັບທີ່ເອົາມາເຊື່ອມຕໍ່ກັນ
ຕົວຢ່າງ	**1. ກ** ມີເຄື່ອງຈັກລົດໃຫຍ່ ແລະ **ຂ** ມີເຮືອນລົດໃຫຍ່ ໄດ້ຕົກລົງມາປະກອບເຂົ້າກັນ ເພື່ອນຳໃຊ້ເຂົ້າໃນການຂົນສົ່ງສິນຄ້າ ເຄື່ອງຈັກລົດ ແລະ ເຮືອນລົດ ທີ່ປະກອບເຂົ້າກັນນັ້ນ ກໍຈະເປັນກຳມະສິດລວມ ຕາມສັດສ່ວນຂອງມູນຄ່າຊັບທີ່ເອົາມາປະກອບເຂົ້າກັນ. **2. ກ** ມີກີ່ຕ່າໜ່ວຍໜຶ່ງແຕ່ບໍ່ມີສາຍຍ້ອນສາຍມັນຂາດໝົດແລ້ວ ສ່ວນ **ຂ** ມີສາຍກີ່ຕ່າ ແຕ່ບໍ່ມີໜ່ວຍກີ່ຕ່າ ຍ້ອນໜ່ວຍກີ່ຕ່າຂອງ **ຂ** ເພແລ້ວ ດັ່ງນັ້ນ **ກ** ກັບ **ຂ** ຈຶ່ງຕົກລົງວ່າໃຫ້ເອົາສາຍກີ່ຕ່າຂອງ **ຂ** ມາຕໍ່ໃສ່ໜ່ວຍກີ່ຕ່າຂອງ **ກ** ໃນກໍລະນີນີ້ຖືວ່າສາຍກີ່ຕ່ານັ້ນເປັນສ່ວນໜຶ່ງຂອງໜ່ວຍກີ່ຕ່າ ດັ່ງນັ້ນ **ກ** ກໍຈະເປັນເຈົ້າກຳມະສິດທັງໝົດລວມທາງໜ່ວຍກີ່ຕ່າ ແລະ ສາຍກີ່ຕ່າ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງໃໝ່ ເນື່ອງຈາກວ່າ: ຂໍ້ຂັດແຍ່ງກ່ຽວກັບການເຊື່ອມຕໍ່ອະສັງຫາລິມະຊັບໃນປະເທດເຮົາ ຍັງມີລັກສະນະແຜ່ຫຼາຍ, ແຕ່ການແກ້ໄຂຂໍ້ຂັດແຍ່ງ ວ່າຊັບທີ່ເອົາມາໂຮມກັນນັ້ນ ຈະເປັນຂອງໃຜ ແລະ ຈະແກ້ໄຂແນວໃດ ແລະ ຍັງບໍ່ທັນມີຫຼັກການຂອງກົດໝາຍທີ່ເປັນເອກະພາບ ຊຶ່ງໃນໄລຍະຜ່ານມາ ແມ່ນອີງໃສ່ສັນຍາ ເປັນພື້ນຖານໃນການແກ້ໄຂ; ແຕ່ຖ້າຄູ່ກໍລະນີ ຫາກບໍ່ໄດ້ຕົກລົງກັນ ກໍມີຄວາມຫຍຸ້ງຍາກໃນການແກ້ໄຂ. ເພື່ອໃຫ້ເປັນທີ່ຮັບໄດ້ຂອງທຸກຝ່າຍ ແລະ ໃຫ້ລະອຽດຕື່ມ ຈຶ່ງເຫັນວ່າມີຄວາມຈຳເປັນຕ້ອງໄດ້ກຳນົດໃໝ່.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 243 ແລະ 244 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ, ມາດຕາ 947 ຂອງປະມວນກົດໝາຍແພ່ງເຢຍລະມັນ; ມາດຕາ 225 ຂອງປະມວນກົດໝາຍແພ່ງຫວຽດນາມປີ 2015.
ມາດຕາອ້າງອີງ	ມາດຕາ 310 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 310 ການປະສົມສັງຫາລິມະຊັບເຂົ້າກັນ

ການປະສົມສັງຫາລິມະຊັບເຂົ້າກັນ ແມ່ນການນຳເອົາສັງຫາລິມະຊັບໃດໜຶ່ງ ປະສົມເຂົ້າກັບສັງຫາລິມະຊັບອື່ນ ແລ້ວກາຍເປັນສັງຫາລິມະຊັບໃໝ່ ຊຶ່ງບໍ່ສາມາດແຍກອອກຈາກກັນໄດ້.

ກຳມະສິດຕໍ່ສັງຫາລິມະຊັບທີ່ປະສົມເຂົ້າກັນໃຫ້ປະຕິບັດຄືກັນກັບການເຊື່ອມຕໍ່ສັງຫາລິມະຊັບເຂົ້າກັນຕາມທີ່ໄດ້ກຳນົດໄວ້ໃນມາດຕາ 309 ຂອງປະມວນກົດໝາຍສະບັບນີ້.

ຈຸດປະສົງ	ເພື່ອກຳນົດກ່ຽວກັບການໄດ້ກຳມະສິດຮ່ວມກັນ ກ່ຽວກັບສັງຫາລິມະຊັບທີ່ເອົາມາປະສົມເຂົ້າກັນ.
ຕົວຢ່າງ	**1. ກ** ແລະ **ຂ** ໄດ້ຕົກລົງ ເອົາເຂົ້າຂອງ **ກ** ຈຳນວນ 200 ກກ ແລະ ເຂົ້າ ຂອງ **ຂ** 300 ກກ ມາປະສົມປົນກັນ ເພື່ອຂາຍຮ່ວມກັນ. ເຂົ້າທີ່ປົນກັນນັ້ນ, ກໍຈະເປັນກຳມະສິດລວມຂອງ **ກ** ແລະ **ຂ** ຕາມສັດສ່ວນຂອງມູນຄ່າຊັບຂອງສອງຄົນກ່ອນການເຊື່ອມຕໍ່ໃສ່ກັນ.

	2. ກ ໄດ້ເອົາເຂົ້າເປືອກຈຳນວນ 100 ກິໂລ ມາສີປົນກັບເຂົ້າເປືອກຂອງ **ຂ** ຈຳນວນ 150 ກິໂລ, ພາຍຫຼັງທີ່ໄດ້ນຳເອົາເຂົ້າທັງໝົດນັ້ນໄປສີໝົດແລ້ວ ເຂົ້າສານທີ່ໄດ້ມານັ້ນ ກໍຈະກາຍເປັນກຳມະສິດຮ່ວມລະຫວ່າງ **ກ** ກັບ **ຂ** ,ໃນ ກໍລະນີທີ່ໄດ້ນຳເອົາເຂົ້າສານທັງໝົດນັ້ນຂາຍ ເມື່ອໄດ້ເງິນມາກໍໃຫ້ແບ່ງຕາມສັກ ສ່ວນ,ຕາມພູດໂດຍອີງໃສ່ຈຳນວນກິໂລ ຫຼື ນ້ຳໜັກຂອງເຂົ້າເປືອກນັ້ນ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ ສ້າງຂຶ້ນໃໝ່ ເນື່ອຈາກວ່າ: ຂໍ້ຂັດແຍ່ງກ່ຽວກັບການປະສົມສັງຫາລິມະ ຊັບໃນປະເທດເຮົາ ຍັງມີລັກສະນະແຜ່ຫຼາຍ, ແຕ່ການແກ້ໄຂຂໍ້ຂັດແຍ່ງວ່າ ຊັບທີ່ ເອົາມາໂຮມກັນນັ້ນ ຈະເປັນຂອງໃຜ ແລະ ຈະແກ້ໄຂແນວໃດ ແລະ ຍັງບໍ່ທັນ ມີຫຼັກການຂອງກົດໝາຍທີ່ເປັນເອກະພາບ ຊຶ່ງໃນໄລຍະຜ່ານມາ ແມ່ນອີງໃສ່ ສັນຍາ ເປັນພື້ນຖານໃນການແກ້ໄຂ; ແຕ່ຖ້າຄູ່ກໍລະນີ ຫາກບໍ່ໄດ້ຕົກລົງກັນ ກໍມີ ຄວາມຫຍຸ້ງຍາກໃນການແກ້ໄຂ. ເພື່ອໃຫ້ເປັນທີ່ຮັບໄດ້ຂອງທຸກຝ່າຍ ແລະ ໃຫ້ລະອຽດຕື່ມ ຈຶ່ງເຫັນວ່າ ມີຄວາມ ຈຳເປັນຕ້ອງໄດ້ກຳນົດໃໝ່.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງຂອງປະເທດອື່ນ	ມາດຕາ 948 ຂອງປະມວນກົດໝາຍແພ່ງເຢຍລະມັນ, ມາດຕາ 245 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ; ມາດຕາ 226 ຂອງປະມວນກົດໝາຍແພ່ງຫວຽດນາມປີ 2015.
ມາດຕາອ້າງອີງ	ມາດຕາ 309 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 311 ການປຸງແຕ່ງ

ການປຸງແຕ່ງ ແມ່ນ ການເອົາຊັບສິ່ງຂອງໃດໜຶ່ງ ຫຼື ຫຼາຍອັນມາປຸງແຕ່ງເປັນຊັບສິ່ງຂອງໃໝ່, ຊັບສິ່ງ ຂອງດັ່ງກ່າວຈະຕົກເປັນກຳມະສິດຂອງເຈົ້າຂອງຊັບສິ່ງຂອງທີ່ນຳມາປຸງແຕ່ງນັ້ນ.

ໃນກໍລະນີທີ່ມູນຄ່າຂອງການປຸງແຕ່ງຫາກສູງກວ່າມູນຄ່າຂອງຊັບສິ່ງຂອງທີ່ນຳມາປຸງແຕ່ງ, ຊັບສິ່ງຂອງ ໃໝ່ນັ້ນ ກໍຈະຕົກເປັນກຳມະສິດຂອງຜູ້ປຸງແຕ່ງ, ເວັ້ນເສຍແຕ່ຫາກໄດ້ຕົກລົງກັນໄວ້ເປັນຢ່າງອື່ນ.

ໃນກໍລະນີທີ່ຜູ້ປຸງແຕ່ງ ຫາກເອົາຊັບສິ່ງຂອງຂອງຕົນປະກອບເຂົ້າໃນການປຸງແຕ່ງ ແລະ ມູນຄ່າ ຂອງການປຸງແຕ່ງບວກກັບມູນຄ່າຂອງຊັບສິ່ງຂອງທີ່ຜູ້ກ່ຽວນຳມາປະກອບນັ້ນ ຫາກສູງກວ່າມູນຄ່າຊັບສິ່ງ ຂອງຂອງຜູ້ອື່ນຊັບສິ່ງຂອງທີ່ໄດ້ປຸງແຕ່ງຂຶ້ນມາໃໝ່ນັ້ນ ກໍຈະຕົກເປັນກຳມະສິດຂອງຜູ້ປຸງແຕ່ງ.

ຈຸດປະສົງ	ເພື່ອກຳນົດ ການໄດ້ກຳມະສິດຮ່ວມກັນກ່ຽວກັບ ຊັບສິ່ງຂອງທີ່ເອົາມາປຸງແຕ່ງ ເຂົ້າກັນ.
ຕົວຢ່າງ	**1. ກ** ເປັນນັກແຕ້ມຮູບທີ່ມີຊື່ສຽງ ໄດ້ຕົກລົງແຕ້ມຮູບທຳມະຊາດໂດຍນຳໃຊ້ ເຈ້ຍ, ແລະ ອຸປະກອນການແຕ້ມຮູບຂອງ **ຂ** ລວມມູນຄ່າ 100.000 ກີບ. ພາຍຫຼັງແຕ້ມແລ້ວ ຮູບທີ່ **ກ** ແຕ້ມ ມີມູນຄ່າ 200.000 ກີບ. ຮູບແຕ້ມນັ້ນ, ກໍຈະເປັນກຳມະສິດລວມຂອງ **ກ** ແລະ **ຂ** ຕາມສັດສ່ວນຂອງມູນຄ່າ ຊັບຂອງ ສອງຄົນໃນເວລາປຸງແຕ່ງ. **2. ກ** ໄດ້ເອົາອຸປະກອນແຕ້ມຮູບມາໃຫ້ **ຂ** ແຕ້ມພາບທຳມະຊາດ ຊຶ່ງລາຄາອຸ ປະກອນແຕ້ມຮູບນັ້ນມີມູນຄ່າ 200,000 ກີບ ແຕ່ຮູບພາບທີ່ **ຂ** ແຕ້ມນັ້ນປົກກະ ຕິແລ້ວລາຄາຕ່ຳສຸດແມ່ນ 2.000.000 ກີບ ກໍລະນີນີ້ຮູບແຕ້ມດັ່ງກ່າວ ຈະເປັນ ກຳມະສິດຂອງ **ຂ** ຜູ້ແຕ້ມ.

ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງໃໝ່ເນື່ອງຈາກว่า: ຂໍ້ຂັດແຍ່ງກ່ຽວກັບການປຸງແຕ່ງ ໃນປະເທດເຮົາ ຍັງມີລັກສະນະແຜ່ຫຼາຍ, ແຕ່ການແກ້ໄຂຂໍ້ຂັດແຍ່ງ ວ່າຊັບທີ່ເອົາມາໂຮມກັນນັ້ນ ຈະເປັນຂອງໃຜ ແລະ ຈະແກ້ໄຂແນວໃດ ແລະ ຍັງບໍ່ທັນມີຫຼັກການຂອງກົດໝາຍທີ່ເປັນເອກະພາບ ຊຶ່ງໃນໄລຍະຜ່ານມາ ແມ່ນອີງໃສ່ສັນຍາ ເປັນພື້ນຖານໃນການແກ້ໄຂ; ແຕ່ຖ້າຄູ່ກໍລະນີ ຫາກບໍ່ໄດ້ຕົກລົງກັນ ກໍມີຄວາມຫຍຸ້ງຍາກໃນການແກ້ໄຂ. ເພື່ອໃຫ້ເປັນທີ່ຮັບໄດ້ຂອງທຸກຝ່າຍ ແລະ ໃຫ້ລະອຽດຕື່ມ ຈຶ່ງເຫັນວ່າມີຄວາມຈຳເປັນ ຕ້ອງໄດ້ກຳນົດໃໝ່.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 246 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ; ມາດຕາ 948 ຂອງປະມວນກົດໝາຍແພ່ງເຢຍລະມັນ; ມາດຕາ 227 ຂອງປະມວນກົດໝາຍແພ່ງຫວຽດນາມ ປີ2015.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 312 ການສິ້ນສຸດສິດຂອງບຸກຄົນທີສາມ

ຖ້າກຳມະສິດຕໍ່ຊັບສິ່ງຂອງ ຂອງເຈົ້າກຳມະສິດຕາມທີ່ໄດ້ກຳນົດໄວ້ໃນມາດຕາ 307 ຫາ ມາດຕາ 311 ຂອງປະມວນກົດໝາຍສະບັບນີ້ ຫາກສິ້ນສຸດລົງ, ສິດອື່ນຂອງບຸກຄົນທີສາມຕໍ່ຊັບສິ່ງຂອງນັ້ນ ກໍຈະສິ້ນສຸດລົງເຊັ່ນດຽວກັນ. ຖ້າເຈົ້າກຳມະສິດໃນຊັບສິ່ງຂອງ ຫາກໄດ້ກຳມະສິດລວມ, ບຸກຄົນທີສາມ ກໍຈະສືບຕໍ່ມີສິດຕໍ່ຊັບສິ່ງຂອງໃນສ່ວນຂອງຊັບສິ່ງຂອງຂອງເຈົ້າກຳມະສິດ. ຖ້າເຈົ້າກຳມະສິດຂອງຊັບສິ່ງຂອງຫາກກາຍເປັນເຈົ້າກຳມະສິດແຕ່ພຽງຜູ້ດຽວ, ສິດກໍຈະກວມເອົາຊັບສິ່ງຂອງທັງໝົດ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນ ກ່ຽວກັບຜົນຂອງການໄດ້ກຳມະສິດ ໂດຍການເຊື່ອມຕໍ່ຊັບສິ່ງຂອງເຂົ້າກັນ, ລວມທັງກໍລະນີບຸກຄົນທີສາມ ເສຍກຳມະສິດ.
ຕົວຢ່າງ	**1.** ອາຄານທີ່ເປັນກຳມະສິດຂອງ **ກ** ກັບອາຄານທີ່ເປັນກຳມະສິດຂອງ **ຂ** ຢູ່ຕິດກັນ, **ກ** ແລະ **ຂ** ຈຶ່ງໄດ້ຕົກລົງກັນເອົາອາຄານທັງ 2 ເຊື່ອມຕໍ່ເຂົ້າກັນເປັນອາຄານອັນດຽວ. ທັງສອງຈະມີກຳມະສິດຮ່ວມກັນໃນອາຄານດັ່ງກ່າວ ໂດຍຖ້າ **ກ** ກັບ **ຂ** ຫາກໄດ້ຕົກລົງກຳນົດເອົາພູດ ຂອງແຕ່ລະຄົນຕາມມູນຄ່າຂອງອາຄານ ໃຜມັນແມ່ນໃຫ້ເອົາຕາມການຕົກລົງ, ແຕ່ຖ້າບໍ່ໄດ້ຕົກລົງກັນໄວ້ແມ່ນຈະໄດ້ພູດທໍ່ກັນ (ຄົນລະ 1/2). ກໍລະນີອາຄານຂອງ **ກ** ຍັງຕິດຈຳນອງນຳທະນາຄານ **ຄ**, ສິດຕໍ່ການຈຳນອງຂອງ **ຄ** ແມ່ນຈະຂຶ້ນກັບສ່ວນຂອງ **ກ** (1/2) ໃນອາຄານໂຕໃໝ່ນັ້ນ. **2. ກ** ໄດ້ເອົາຈັກທີ່ເປັນກຳມະສິດຮ່ວມຂອງ **ກ** ກັບ **ຂ** ມາຕິດຈອດກັບເຮືອທີ່ເປັນກຳມະສິດຂອງ **ຄ.** ຖ້າຕີຄວາມວ່າເຮືອຂອງ **ຄ** ເປັນຊັບທີ່ເປັນພື້ນຖານຕົ້ນຕໍ (ມາດຕາ 309 ວັກ 2), ເຮືອທີ່ຕິດຈັກນັ້ນກໍຈະເປັນກຳມະສິດຂອງ **ຄ.** ດັ່ງນັ້ນເມື່ອກຳມະສິດຂອງ **ກ** ຕົກໄປ, ກຳມະສິດຂອງ **ຂ** ກໍຈະຕົກໄປນຳ, ແຕ່ຖ້າວ່າ **ກ** ມີ ກຳມະສິດຕໍ່ຊັບສິ່ງຂອງ ຫາກໄດ້ກຳມະສິດລວມ, **ຂ** ບຸກຄົນທີສາມ ກໍຈະສືບຕໍ່ມີສິດຕໍ່ ຈັກໃນສ່ວນທີ່ເປັນຂອງ **ກ** ເທົ່ານັ້ນ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງໃໝ່ ເນື່ອງຈາກว่า: ການໂຮມຊັບ ພາໃຫ້ກຳມະສິດກ່ຽວກັບຊັບທີ່ເອົາມາໂຮມກັນ ປ່ຽນແປງ, ເກີດຂຶ້ນ ຫຼື ສິ້ນສຸດລົງ ຊຶ່ງນຳໄປສູ່ການປ່ຽນແປງຂອງສິດທີ່ຕິດພັນກັບກຳມະສິດຂອງຊັບທີ່ເອົາມາໂຮມກັນ ເຊັ່ນດຽວກັນ. ສະນັ້ນ, ການກຳນົດມາດຕານີ້ເຂົ້າ ແມ່ນມີຄວາມຈຳເປັນ ເພື່ອອະທິບາຍກ່ຽວກັບການປ່ຽນແປງຂອງສິດດັ່ງກ່າວ.

ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງຂອງປະເທດອື່ນ	ມາດຕາ 247 ຂອງປະມວນກົດໝາຍແພ່ງ ຍີ່ປຸ່ນ; ມາດຕາ 949 ຂອງປະມວນກົດໝາຍແພ່ງເຢຍລະມັນ.
ມາດຕາອ້າງອີງ	ມາດຕາ 307 311 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 313 ການທົດແທນມູນຄ່າຂອງຊັບສິ່ງຂອງ

ບຸກຄົນໃດຫາກເສຍສິດຂອງຕົນຕາມທີ່ໄດ້ກຳນົດໄວ້ໃນມາດຕາ 307 ຫາ ມາດຕາ 311 ຂອງ ປະມວນກົດໝາຍສະບັບນີ້ມີສິດທວງໃຫ້ທົດແທນມູນຄ່າຂອງຊັບສິ່ງຂອງຂອງຕົນນຳເຈົ້າກຳມະສິດໃໝ່.

ຈຸດປະສົງ	ເພື່ອກຳນົດກ່ຽວກັບການທົດແທນ ມູນຄ່າຂອງຊັບສິ່ງຂອງທີ່ສິດທວງໄດ້ສິ້ນສຸດລົງ ເວລາເອົາຊັບສິ່ງຂອງມາໂຮມກັນ.
ຕົວຢ່າງ	**ກ** ໄດ້ເອົາຈັກ ທີ່ເປັນກຳມະສິດຂອງຕົນໄປຈອດຕິດກັບເຮືອທີ່ເປັນກຳມະສິດ ຂອງ **ຂ.** ຖ້າຕີຄວາມໝາຍຕາມມາດຕາ 309 ວັກ3 ແລ້ວເຫັນວ່າເຮືອຂອງ **ຂ** ເປັນ ຊັບທີ່ເປັນພື້ນຖານຕົ້ນຕໍ ດັ່ງນັ້ນຈັກທີ່ຕິດກັບເຮືອນັ້ນ ກໍຈະເປັນກຳມະສິດຂອງ **ຂ.** ສ່ວນ **ກ** ທີ່ເສຍກຳມະສິດໃນຈັກນັ້ນ, ສາມາດທວງເອົາການທົດແທນຂອງ ມູນຄ່າຂອງ ຈັກດັ່ງກ່າວຈາກ **ຂ** ຜູ້ໄດ້ກຳມະສິດ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ ສ້າງໃໝ່ ໂດຍອີງຕາມແນວຄວາມຄິດມາຈາກມາດຕາ 99 ກົດໝາຍ ວ່າດ້ວຍຂໍ້ຜູກພັນໃນ ແລະ ນອກສັນຍາ ປີ 2008 ເນື່ອງຈາກว່າ: ການແກ້ໄຂ ຂໍ້ຂັດແຍ່ງກ່ຽວກັບການໂຮມຊັບເຂົ້າກັນ ແມ່ນມີຄວາມຈຳເປັນ ເພື່ອທົດແທນ ມູນຄ່າຊັບ ເມື່ອສິດກ່ຽວກັບຊັບສິ່ງຂອງໄດ້ສິ້ນສຸດລົງ.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງຂອງປະເທດອື່ນ	ມາດຕາ 946 - 951 ຂອງປະມວນກົດໝາຍແພ່ງ ເຢຍລະມັນ; ມາດຕາ 227 ຂອງປະມວນກົດໝາຍແພ່ງຫວຽດນາມປີ2015; ມາດຕາ 248 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 307 - 311 ແລະ 501 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 314 ການໄດ້ກຳມະສິດຕາມອາຍຸຄວາມ

ບຸກຄົນໃດທີ່ໄດ້ຄອບຄອງຊັບສິ່ງຂອງຂອງບຸກຄົນອື່ນດ້ວຍຄວາມບໍລິສຸດໃຈຄົບອາຍຸຄວາມຕາມ ທີ່ໄດ້ກຳນົດໄວ້ໃນມາດຕາ 51 ຂອງປະມວນກົດໝາຍສະບັບນີ້, ຈະໄດ້ກຳມະສິດຕໍ່ຊັບສິ່ງຂອງນັ້ນແລະເຈົ້າ ກຳມະສິດເດີມກໍຈະເສຍກຳມະສິດຕໍ່ຊັບສິ່ງຂອງດັ່ງກ່າວ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນວ່າ ຜູ້ຄອບຄອງໄດ້ກຳມະສິດໂດຍອາຍຸຄວາມໄດ້ສິດ ທີ່ກຳ ນົດໃນມາດຕາ 51 ຂອງປະມວນກົດໝາຍແພ່ງນັ້ນ, ເຮັດໃຫ້ເຈົ້າກຳມະສິດເດີມ ເສຍກຳມະສິດ. ແລະກຳນົດໃຫ້ເຫັນວ່າອາຍຸຄວາມໄດ້ສິດ ແມ່ນໜຶ່ງໃນສາເຫດ ທີ່ພາໃຫ້ໄດ້ກຳມະສິດ (ມາດຕາ 293 ຂໍ້ 8).
ຕົວຢ່າງ	**1. ກ** ໄດ້ຄອບຄອງທີ່ດິນຕອນໜຶ່ງດ້ວຍຄວາມບໍລິສຸດໃຈມາເປັນເວລາ 22 ປີ ແລ້ວ, ຕໍ່ມາໄດ້ມີ **ຂ** ມາທັກທ້ວງວ່າທີ່ດິນຕອນດັ່ງກ່າວ ແມ່ນເປັນຂອງ **ຂ** ແຕ່ **ກ** ບໍ່ສົ່ງຄືນໂດຍໄດ້ອ້າງວ່າ ທີ່ດິນຕອນນີ້ **ກ** ໄດ້ຄອບຄອງມາເປັນເວລາ 22 ປີ ແລ້ວ ດັ່ງນັ້ນ **ກ** ຈຶ່ງເປັນຜູ້ມີສິດນຳໃຊ້ຕໍ່ທີ່ດິນຕອນດັ່ງກ່າວ.

	2. ໃນວັນທີ 1 ມັງກອນ ປີ 1990, **ກ** ທີ່ມີຄວາມບໍລິສຸດໃຈ ໄດ້ຊື້ທີ່ດິນ 1 ເຮັກຕາຈາກ **ຂ** ຊຶ່ງແມ່ນທີ່ດິນທີ່ **ຂ** ໄດ້ປອມແປງເອກະສານແລ້ວ ຈຶ່ງນຳມາຂາຍໃຫ້ **ກ** ພາຍຫຼັງທີ່ **ກ** ຊື້ໄດ້ແລ້ວ ຜູ້ກ່ຽວກໍໄດ້ນຳໄປຂຶ້ນທະບຽນ. ມາຮອດວັນທີວັນທີ 2 ມັງກອນ 2011, **ຄ** ໄດ້ມາທວງເອົາທີ່ດິນດັ່ງກ່າວຄືນ, ແຕ່ **ກ** ບໍ່ສົ່ງ ໂດຍໄດ້ເວົ້າວ່າ ຕົນໄດ້ກາຍເປັນເຈົ້າຂອງທີ່ດິນ ຢ່າງສົມບູນ ຍ້ອນຕົນໄດ້ຄອບຄອງຊັບສິ່ງຂອງດັ່ງກ່າວ ມາແລ້ວເປັນເວລາ 21 ປີແລ້ວ.
ເຫດຜົນໃນການປັບປຸງ	ມາດຕານີ້ ປັບປຸງມາຈາກ ມາດຕາ 42 ຂອງກົດໝາຍວ່າດ້ວຍກຳມະສິດ ເນື່ອງຈາກວ່າ ເມື່ອກ່ອນ ສປປ ລາວ ຍັງບໍ່ທັນມີປະມວນກົດໝາຍແພ່ງ ຊຶ່ງພາໃຫ້ອາຍຸຄວາມຢາຍຢູ່ໃນກົດໝາຍສະເພາະ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 162 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 51 ແລະ 317 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ໝວດທີ 7
ການສິ້ນສຸດກຳມະສິດ

ມາດຕາ 315 ການສິ້ນສຸດກຳມະສິດ

ການສິ້ນສຸດກຳມະສິດ ມີດັ່ງນີ້:

1. ເຈົ້າກຳມະສິດຫາກໄດ້ຊີ້ຂາດກ່ຽວກັບຊັບສິ່ງຂອງຢ່າງສົມບູນແລ້ວ;
2. ມີບຸກຄົນໃດໜຶ່ງໄດ້ກຳມະສິດຍ້ອນອາຍຸຄວາມ;
3. ຊັບສິ່ງຂອງຖືກຍຶດເພື່ອຂາຍເລຫຼັງຫຼືຖືກຮິບເປັນຂອງລັດ;
4. ຊັບສິ່ງຂອງນັ້ນຫາກຖືກທຳລາຍຫຼືສູນຫາຍ;

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນ ເປັນລາຍການກ່ຽວກັບສາເຫດຕ່າງໆ ຂອງການສິ້ນສຸດກຳມະສິດ.
ຕົວຢ່າງ	ຂໍ້ທີ 1 ເບິ່ງຕົວຢ່າງມາດຕາ 316 ຂອງບົດອະທິບາຍປະມວນ ກົດໝາຍແພ່ງ; ຂໍ້ທີ2 ເບິ່ງຕົວຢ່າງມາດຕາ 317 ຂອງບົດອະທິບາຍປະມວນ ກົດໝາຍແພ່ງ; ຂໍ້ທີ3 ເບິ່ງຕົວຢ່າງມາດຕາ 318 ຂອງບົດອະທິບາຍປະມວນ ກົດໝາຍແພ່ງ; ຂໍ້ທີ 4 ເບິ່ງຕົວຢ່າງມາດຕາ 319 ຂອງບົດອະທິບາຍປະມວນ ກົດໝາຍແພ່ງ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 45 ຂອງກົດໝາຍວ່າດ້ວຍກຳມະສິດ ປີ 1990 ທີ່ໄດ້ກຳນົດກ່ຽວກັບ ການສິ້ນສຸດກຳມະສິດ ຊຶ່ງເຫັນວ່າ ຍັງສອດຄ່ອງກັບສະພາບຄວາມເປັນຈິງ ໂດຍໄດ້ຕື່ມກໍລະນີຂອງການເສຍຊີວິດເຂົ້າໃສ່ຕື່ມ ເພື່ອໃຫ້ຄົບ ຖ້ວນພ້ອມທັງໄດ້ປັບປຸງວິທີການຂຽນ ເພື່ອໃຫ້ເຂົ້າໃຈງ່າຍ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 237 ຂອງປະມວນກົດໝາຍແພ່ງຫວຽດນາມ2015.
ມາດຕາອ້າງອີງ	ມາດຕາ 316, 317, 318 ແລະ 319 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 316 ການຊື້ຂາດກ່ຽວກັບຊັບສິ່ງຂອງ

ເມື່ອເຈົ້າກຳມະສິດຫາກໄດ້ຊື້ຂາດກ່ຽວກັບຊັບສິ່ງຂອງດ້ວຍການຂາຍ, ແລກປ່ຽນ, ການມອບ, ການຍົກຊັບ, ການສະລະຊັບສິ່ງຂອງ, ການທຳລາຍຊັບສິ່ງຂອງ ແລະ ອື່ນໆ ກໍຈະເຮັດໃຫ້ກຳມະສິດຂອງຜູ້ກ່ຽວຕໍ່ຊັບສິ່ງຂອງສິ້ນສຸດລົງ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນ ເຖິງຮູບການຊື້ຂາດ ຕໍ່ກຳມະສິດໂດຍຍົກເປັນກໍລະນີ, ແລະ ເມື່ອເຮັດຕາມຮູບການເຫຼົ່ານີ້ແລ້ວ ກຳມະສິດຂອງຜູ້ທີ່ໄດ້ຊື້ຂາດນັ້ນກໍຈະສິ້ນສຸດລົງ.
ຕົວຢ່າງ	**1. ການຊື້ຂາດດ້ວຍການຊື້ຂາຍ:** **ກ** ໄດ້ຂາຍລົດຈັກໃຫ້ **ຂ** ແລະ **ກ** ກໍໄດ້ມອບລົດໃຫ້ **ຂ** ຕາມທີ່ໄດ້ຕົກລົງກັນ ກໍລະນີນີ້ຖືວ່າແມ່ນ **ກ** ໄດ້ຊື້ຂາດກຳມະສິດຕໍ່ລົດຄັນດັ່ງກ່າວໃຫ້ **ຂ**. **2. ການຊື້ຂາດດ້ວຍການແລກປ່ຽນ:** **ກ** ມີລົດຈັກ ຮອນດາດີມ 100 ໜຶ່ງຄັນແລ້ວ **ກ** ໄດ້ຕົກລົງໄປ ແລກປ່ຽນ ເອົາລົດຈັກ ຮອນດາ ຫ້າສີບຂອງ **ຂ**. ກໍລະນີນີ້ຖືວ່າ **ກ** ໄດ້ຊື້ຂາດກຳມະສິດຕໍ່ລົດຄັນດັ່ງກ່າວໃຫ້ **ຂ**. **3. ການຊື້ຂາດດ້ວຍການມອບຊັບ:** **ກ** ໄດ້ມອບໂທລະສັບຈຳນວນ ໜຶ່ງໜ່ວຍ ໃຫ້ **ຂ** ເປັນກຳມະສິດ ກໍລະນີນີ້ແມ່ນ **ກ** ໄດ້ຊື້ຂາດກຳມະສິດຕໍ່ໂທລະສັບດັ່ງກ່າວໃຫ້ **ຂ** ໄປແລ້ວ. 4. **ການຊື້ຂາດດ້ວຍການຍົກຊັບ:** **ກ** ຜູ້ເປັນພໍ່ມີທີ່ດິນ 1 ຕອນ **ກ** ໄດ້ຍົກທີ່ດິນຕອນດັ່ງກ່າວໃຫ້ **ຂ** ຜູ້ເປັນລູກ ເປັນກຳມະສິດໂດຍໃຫ້ **ຂ** ຕ້ອງລ້ຽງດູ **ຄ** ຜູ້ເປັນນ້ອງໃຫ້ຮອດ 18 ປີ. **5. ການຊື້ຂາດດ້ວຍການສະລະຊັບ:** **ກ** ມີຕູ້ເຢັນໜ່ວຍໜຶ່ງທີ່ໄດ້ນຳໃຊ້ມາຫຼາຍປີແລ້ວ ຕໍ່ມາ **ກ** ໄດ້ເອົາຕູ້ເຢັນໜ່ວຍດັ່ງກ່າວໄປຖິ້ມຢູ່ສະຖານທີ່ຖິ້ມຂີ້ເຫຍື້ອ ໃນກໍລະນີນີ້ຖືວ່າ **ກ** ໄດ້ສະລະຕູ້ເຢັນໜ່ວຍນັ້ນໄປແລ້ວ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງໃໝ່ ເພື່ອໃຫ້ສອດຄ່ອງກັບແບບວິທີ ຂຽນກົດໝາຍຂອງປະເທດເຮົາ ໂດຍກຳນົດມາດຕາເປີດກ່ອນ ແລ້ວ ຈຶ່ງກຳນົດມາດຕາອະທິບາຍຕາມຫຼັງ. ພ້ອມທັງອະທິບາຍກ່ຽວກັບການຊື້ຂາດໃຫ້ຈະແຈ້ງຕື່ມ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 238 ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2015.
ມາດຕາອ້າງອີງ	ມາດຕາ 315 ຂໍ້ 1 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 317 ການໄດ້ກຳມະສິດໂດຍບຸກຄົນໃດໜຶ່ງ ຍ້ອນອາຍຸຄວາມ

ເມື່ອບຸກຄົນໃດໜຶ່ງຫາກໄດ້ກຳມະສິດຍ້ອນອາຍຸຄວາມ ເຈົ້າກຳມະສິດເດີມກໍຈະເສຍສິດຕໍ່ຊັບສິ່ງ ຂອງຂອງຕົນ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນວ່າກໍລະນີທີ່ຜູ້ຄອບຄອງ ໄດ້ກຳມະສິດໂດຍອາຍຸຄວາມໄດ້ສິດທີ່ກຳນົດໃນມາດຕາ 51 ຂອງປະມວນກົດໝາຍແພ່ງນັ້ນ,ເຈົ້າກຳມະສິດເດີມ ກໍຈະເສຍກຳມະສິດຕໍ່ຊັບດັ່ງກ່າວ. ສຳລັບເຈົ້າກຳມະສິດເດີມແລ້ວອາຍຸຄວາມ ໄດ້ສິດຖືເປັນໜຶ່ງໃນສາເຫດທີ່ພາໃຫ້ເສຍກຳມະສິດ (ມາດຕາ 315 ຂໍ້ 2 ຂອງປະມວນກົດໝາຍແພ່ງ).
ຕົວຢ່າງ	**1. ກ** ໄດ້ຄອບຄອງລົດທີ່ໄດ້ຊື້ມາຈາກ **ຂ** ໂດຍທີ່ **ກ** ບໍ່ຮູ້ວ່າລົດຄັນດັ່ງກ່າວເປັນ ຂອງ **ຄ** ແລະ **ກ** ໄດ້ນຳເອົາລົດຄັນທີ່ຊື້ນັ້ນໄປຂຶ້ນທະບຽນພາຫະນະ. ພາຍຫຼັງທີ່ **ກ** ໄດ້ຄອບຄອງ ແລະ ນຳໃຊ້ລົດຄັນນັ້ນມາໄດ້ 6 ປີ ແລ້ວຈຶ່ງມີ **ຄ** ມາສະແດງ ຕົນວ່າເປັນເຈົ້າຂອງລົດຄັນນັ້ນ ແຕ່ **ກ** ໄດ້ອ້າງວ່າຕົນໄດ້ຊື້ ແລະ ຄອບຄອງມາໄດ້ 6 ປີແລ້ວຖືວ່າ **ກ** ໄດ້ກຳມະສິດຕໍ່ລົດຂອງ **ຄ** ໄປແລ້ວ. ດ້ວຍເຫດນີ້ **ຄ** ຈຶ່ງເສຍ ກຳມະສິດຕໍ່ລົດຄັນດັ່ງກ່າວ. **2. ກ** ມີທີ່ດິນໜຶ່ງຕອນ ເນື້ອທີ່ 1.000 ຕາແມັດ ຕອນດິນດັ່ງກ່າວ ເປັນປ່າເຫຼົ້າ ແຕ່ **ຂ** ໄດ້ເຂົ້າໄປບຸກເບີກທຳການຜະລິດ (ເຮັດສ່ວນ) ແລະ ຄອບຄອງເປັນເວລາ 20 ປີ ດ້ວຍຄວາມບໍລິສຸດໃຈ, ເປີດເຜີຍ ໂດຍທີ່ **ກ** ບໍ່ໄດ້ເຂົ້າໄປທັກທ້ວງ ບໍ່ພົວພັນກ່ຽວກັບຕອນດິນດັ່ງກ່າວ ດັ່ງນັ້ນ **ຂ** ຜູ້ຄອບຄອງກໍຈະໄດ້ສິດນຳໃຊ້ທີ່ ດິນຕອນນັ້ນ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 36 ຂອງກົດໝາຍວ່າດ້ວຍກຳມະສິດ ປີ 1990 ໂດຍໄດ້ປັບປຸງເນື້ອໃນໃຫ້ສັ້ນເຂົ້າ ແລະ ເຂົ້າໃຈງ່າຍ.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງຂອງປະເທດອື່ນ	ມາດຕາ 937 ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2015.
ມາດຕາອ້າງອີງ	ມາດຕາ 49, 51, 52, 57 ແລະ 314 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 318 ຊັບສິ່ງຂອງຖືກຍຶດເພື່ອຂາຍເລຫຼັງຫຼື ຖືກຮິບເປັນຂອງລັດ

ເມື່ອຊັບສິ່ງຂອງຫາກຖືກຍຶດເພື່ອຂາຍເລຫຼັງ ຫຼື ຖືກຮິບເປັນຂອງລັດຕາມຄຳຕັດສິນຂອງສານ, ສິດຂອງເຈົ້າກຳມະສິດຕໍ່ຊັບສິ່ງຂອງນັ້ນ ກໍຈະສິ້ນສຸດລົງ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນວ່າ ການທີ່ຊັບສິ່ງຂອງຫາກຖືກຍຶດເພື່ອຂາຍເລຫຼັງຫຼືຖືກ ຮິບນັ້ນ, ມັນເປັນສາເຫດພາໃຫ້ກຳມະສິດຂອງເຈົ້າກຳມະສິດເດີມ ຕໍ່ຊັບສິ່ງຂອງ ນັ້ນ ໄດ້ສິ້ນສຸດລົງ.
ຕົວຢ່າງ	**1. ກ** ໄດ້ນຳໃຊ້ລົດຂອງຕົນເອງ ຂົນສົ່ງຢາເສບຕິດ (ຢາບ້າ) ຖືກເຈົ້າໜ້າທີ່ກັກ ຕົວໄດ້ລົດທີ່ໃຊ້ເຂົ້າໃນການກະທຳຜິດ ຈຶ່ງຖືກສານຕັດສິນໃຫ້ຮິບເປັນຂອງລັດ ກໍລະນີນີ້ຖືວ່າ **ກ** ໄດ້ເສຍກຳມະສິດຕໍ່ລົດ ຍ້ອນລົດຖືກຮິບເປັນຂອງລັດ **2. ກ** ໄດ້ປ່ອຍເງິນກູ້ໃຫ້ **ຂ** ເປັນຈຳນວນເງິນ 100.000.000 ກີບ ກຳນົດເວລາ 5 ປີ ພາຍຫຼັງທີ່ໝົດກຳນົດເວລາໃນສັນຍາແລ້ວ **ກ** ໄດ້ທວງສັນຍາ ແຕ່ **ຂ** ບໍ່ຍອມປະຕິບັດຕາມສັນຍາ, ດັ່ງນັ້ນ **ກ** ຈຶ່ງໄດ້ທຳການຮ້ອງຟ້ອງ **ຂ** ຂຶ້ນສານ ຫຼັງຈາກນັ້ນ ສານຈຶ່ງອອກຄຳສັ່ງຍຶດເອົາຊັບສິນທີ່ເປັນລົດຂອງ **ຂ** ເພື່ອນຳໄປ ຂາຍເລຫຼັງ ນຳມາໃຊ້ແທນໜີ້ສິນຂອງ **ຂ.**

ເຫດຜົນໃນການປັບປຸງ	ມາດຕານີ້ ປັບປຸງມາຈາກມາດຕາ 44 ຂອງກົດໝາຍ ວ່າດ້ວຍກຳມະສິດ ໂດຍປັບປຸງເນື້ອໃນໃຫ້ມີຄວາມຊັດເຈນ ແລະ ຮັດກຸມ ເຊັ່ນ: ຊັບສິ່ງຂອງ ຫາກຖືກຍຶດ ຫຼື ຖືກຮິບ ເປັນຂອງລັດ ຕາມຄຳຕັດສິນ ຂອງສານ.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງຂອງປະເທດອື່ນ	ມາດຕາ 244 ຂອງປະມວນກົດໝາຍແພ່ງຫວຽດນາມປີ 2015.
ມາດຕາອ້າງອີງ	ມາດຕາ 315 ຂໍ້ 3 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 319 ຊັບສິ່ງຂອງຖືກທຳລາຍຫຼືສູນຫາຍ

ຖ້າຊັບສິ່ງຂອງຫາກຖືກທຳລາຍຫຼືສູນຫາຍຍ້ອນສາເຫດໃດໜຶ່ງເຊັ່ນໄຟໄໝ້, ນ້ຳຖ້ວມ, ຟ້າຜ່າ, ແຜ່ນດິນໄຫວແລ້ວ,ສິດຂອງເຈົ້າກຳມະສິດຕໍ່ຊັບສິ່ງຂອງນັ້ນ ກໍຈະສິ້ນສຸດລົງ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນວ່າ ການທີ່ຊັບສິ່ງຂອງຫາກຖືກທຳລາຍ ຫຼື ສູນຫາຍນັ້ນ, ແນ່ນອນ ວ່າກຳມະສິດຊຶ່ງນອນຢູ່ໃນຊັບສິ່ງຂອງດັ່ງກ່າວກໍຈະສິ້ນສຸດລົງ.
ຕົວຢ່າງ	**1.** ລົດ ຂອງ **ກ** ຖືກໄຟໄໝ້ກ້ຽງ ດັ່ງນັ້ນກຳມະສິດຂອງ **ກ** ຕໍ່ລົດຄັນດັ່ງກ່າວ ກໍຈະສິ້ນສຸດລົງ. **2.** ເຮືອນຂອງ **ຂ** ໄດ້ຖືກນ້ຳຖ້ວນແລ້ວສູນຫາຍ ກຳມະສິດຂອງ **ຂ** ຕໍ່ກັບເຮືອນ ຫຼັງດັ່ງກ່າວກໍຈະສິ້ນສຸດລົງ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ ສ້າງຂຶ້ນໃໝ່ ເພື່ອໃຫ້ສອດຄ່ອງກັບວິທີຂຽນກົດໝາຍ ຂອງປະ ເທດເຮົາ ໂດຍກຳນົດມາດຕາເປີດກ່ອນ ແລ້ວຈຶ່ງກຳນົດມາດຕາອະທິບາຍຕາມ ຫຼັງ. ພ້ອມທັງອະທິບາຍກ່ຽວກັບຫຼັກການທີ່ຊັບສິ່ງຂອງຖືກທຳລາຍ ຫຼື ສູນ ຫາຍໃຫ້ ຊັດເຈນຂຶ້ນຕື່ມ.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງຂອງປະເທດອື່ນ	ມາດຕາ 242 ຂອງປະມວນກົດໝາຍແພ່ງຫວຽດນາມປີ 2015.
ມາດຕາອ້າງອີງ	ມາດຕາ 315 ຂໍ້ 4 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ໝວດທີ 8
ຂອບເຂດການນຳໃຊ້ກຳມະສິດ

ມາດຕາ 320 ຂອບເຂດການນຳໃຊ້ກຳມະສິດ

ການນຳໃຊ້ກຳມະສິດແມ່ນໃຫ້ນຳໃຊ້ຊັບສິ່ງຂອງທີ່ເປັນຂອງຕົນເພື່ອຕອບສະໜອງຄວາມຕ້ອງ ການທາງດ້ານຊີວິດການເປັນຢູ່ຫຼືຜົນປະ�โຫຍດອັນແນ່ນອນທີ່ຕົນຕ້ອງການ ແຕ່ບໍ່ໃຫ້ກໍຄວາມເສຍຫາຍຫຼື ຂັດກັບສິດແລະຜົນປະ�โຫຍດຂອງລັດ, ຂອງສັງຄົມຫຼືຂອງບຸກຄົນອື່ນ.

ສຳລັບການນຳໃຊ້ທີ່ດິນນັ້ນ ແມ່ນລວມທັງການນຳໃຊ້ພື້ນທີ່ທາງອາກາດ, ເທິງໜ້າດິນ ແລະ ພື້ນ ທີ່ໃຕ້ດິນໃນຂອບເຂດທີ່ສາມາດນຳໃຊ້ ແລະ ມີຜົນປະ�โຫຍດເທົ່ານັ້ນ, ເວັ້ນເສຍແຕ່ກົດໝາຍຫາກໄດ້ກຳນົດ ໄວ້ເປັນຢ່າງອື່ນ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນກ່ຽວກັບຂອບເຂດ ທີ່ເຈົ້າກຳມະສິດສາມາດນຳໃຊ້ຊັບສິ່ງຂອງ ທີ່ເປັນກຳມະສິດຂອງຕົນ. ລວມທັງ, ກຳນົດໃຫ້ເຫັນກ່ຽວກັບຂອບເຂດທີ່ເຈົ້າຂອງສິດນຳໃຊ້ທີ່ດິນສາມາດນຳໃຊ້ທີ່ດິນດັ່ງກ່າວ.
ຕົວຢ່າງ	**1. ກ** ສາມາດນຳໃຊ້ທີ່ດິນ ຂອງຕົນປູກຕົ້ນໝາກມ່ວງ, ໝາກລໍາໄຍ ແລະ ໝາກພ້າວ ໂດຍບໍ່ໄດ້ສ້າງຄວາມເສຍຫາຍ ຫຼື ຂັດກັບສິດ ແລະ ຜົນປະໂຫຍດຂອງລັດຂອງສັງຄົມ ຫຼື ຂອງບຸກຄົນອື່ນ. **2. ກ** ສາມາດນຳໃຊ້ພື້ນທີ່ເທິ່ງໜ້າດິນ ແລະ ພື້ນທີ່ເທິງອາກາດ ທີ່ເປັນກຳມະສິດຂອງຕົນ ເຊັ່ນ: ເນັ່ງສາຍໄຟຟ້າໃນພື້ນທີ່ເທິງອາກາດຂອງຕົນ, ປຸກເຮືອນໃສ່ ແລະ ຂຸດນ້ຳສາງ ວາງທໍ່ນ້ຳລະບາຍນ້ຳ ແລະ ອື່ນໆ ໃນຂອບເຂດທີ່ດິນຂອງຕົນ.
ເຫດຜົນໃນການປັບປຸງ	ມາດຕານີ້ ປັບປຸງມາຈາກ ມາດຕາ 46 ຂອງກົດໝາຍວ່າດ້ວຍກຳມະສິດ 1. ປ່ຽນຄຳສັບ ພາຫະນະ ເປັນຊັບສິ່ງຂອງແທນ, ເນື່ອງຈາກວ່າ ພາຫະນະ ບໍ່ເປັນຄຳສັບ ກວມລວມ ແລະ ບໍ່ໄດ້ລວມເອົາທຸກຊັບສິ່ງຂອງ ທີ່ເປັນເປົ້າໝາຍຂອງກຳມະສິດ. 2. ການກຳນົດຂອບເຂດການນຳໃຊ້ທີ່ດິນ ໂດຍກວມເອົາການນຳໃຊ້ພື້ນທີ່ທາງອາກາດ ແລະ ພື້ນທີ່ໃຕ້ດິນ ແມ່ນມີຄວາມຈຳເປັນ ເນື່ອງຈາກວ່າ ກົດໝາຍປັດຈຸບັນ ຍັງບໍ່ທັນໄດ້ກຳນົດໃສ່. 3. ການກຳນົດດັ່ງກ່າວ ຈະເຮັດໃຫ້ຂອບເຂດການນຳໃຊ້ທີ່ດິນ, ເຂົ້າໃຈງ່າຍ ແລະ ເປັນພື້ນຖານໃຫ້ແກ່ການແກ້ໄຂຂໍ້ຂັດແຍ່ງ ທີ່ອາດຈະເກີດຂຶ້ນໃນອະນາຄົດຊຶ່ງການນຳໃຊ້ພື້ນທີ່ດັ່ງກ່າວ ຈະມີລັກສະນະແຜ່ຫຼາຍ, ແຕ່ທີ່ດິນຊໍ້າພັດຈຳກັດ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 1335 ແລະ 1336 ຂອງປະມວນກົດໝາຍແພ່ງ ແລະ ພານິດໄທ. ມາດຕາ 206 ແລະ 207 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ; ມາດຕາ 905 ຂອງປະມວນກົດໝາຍແພ່ງ ເຢຍລະມັນ; ມາດຕາ 175 ວັກ 2 ຂອງປະມວນກົດໝາຍແພ່ງຫວຽດນາມປີ2015.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 321 ພັນທະຂອງເຈົ້າກຳມະສິດໃນສະພາວະທີ່ຈຳເປັນ

ໃນສະພາວະທີ່ຈຳເປັນ ເຈົ້າກຳມະສິດຕໍ່ຊັບສິ່ງຂອງ ບໍ່ມີສິດຂັດຂວາງບຸກຄົນອື່ນ ໃນການນຳໃຊ້ຊັບສິ່ງຂອງ ຫຼື ບໍ່ມີສິດຂັດຂວາງບຸກຄົນອື່ນໃນການກໍຄວາມເສຍຫາຍຕໍ່ຊັບສິ່ງຂອງຂອງຕົນ ເພື່ອສະກັດກັ້ນ ຫຼື ຫຼຸດຜ່ອນໄພອັນຕະລາຍ ທີ່ເກີດຂຶ້ນ ຫຼື ອາດຈະເກີດຂຶ້ນ.

ການໃຊ້ແທນຄ່າເສຍຫາຍ ຕາມທີ່ໄດ້ກ່າວໄວ້ໃນວັກເທິງນີ້ ໃຫ້ປະຕິບັດຕາມມາດຕາ 483 ຂອງປະມວນກົດໝາຍສະບັບນີ້.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນ ກ່ຽວກັບຂໍ້ຈຳກັດ ຂອງກຳມະສິດ ໃນສະພາວະທີ່ຈຳເປັນ. ລວມທັງກຳນົດໃຫ້ເຫັນກ່ຽວກັບ ວິທີການຟື້ນຟູຕໍ່ຄວາມເສຍຫາຍທີ່ເກີດຂຶ້ນ.

ຕົວຢ່າງ	**ກ** ແລະ **ຂ** ມີເຮືອນໃກ້ຄຽງກັນ. ມື້ໜຶ່ງ ເຮືອນຂອງ **ກ** ເກີດໄຟໄໝ້. **ກ** ໄດ້ນຳໃຊ້ນ້ຳຂອງ **ຂ** ເພື່ອມອດໄຟທີ່ກຳລັງລຸກແຮງຢູ່ນັ້ນ. ພ້ອມກັນນັ້ນ, **ກ** ກໍຍັງໄດ້ທັບມ້າງກຳແພງຮົ້ວຂອງ **ຂ** ເພື່ອໃຫ້ລົດດັບເພີງເຂົ້າໄປມອດໄຟ ຊຶ່ງເຮັດໃຫ້ **ຂ** ມີຄວາມເສຍຫາຍ.ໃນກໍລະນີນີ້, **ຂ** ແມ່ນບໍ່ມີສິດກີດຂວາງການກະທຳຂອງ **ກ.** ສຳລັບຄວາມເສຍຫາຍທີ່ເກີດຂຶ້ນ ຍ້ອນເຫດການດັ່ງກ່າວນັ້ນ **ຂ** ສາມາດທວງເອົາຄ່າຊົດເຊີຍຕໍ່ຄວາມເສຍຫາຍຕາມທີ່ກຳນົດໄວ້ໃນມາດຕາ 483 ຂອງປະມວນກົດໝາຍແພ່ງ.
ເຫດຜົນໃນການປັບປຸງ	ມາດຕານີ້ ປັບປຸງມາຈາກ ມາດຕາ 89 ຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນ ແລະ ນອກສັນຍາ, ກົດໝາຍປະຈຸບັນ ໄດ້ກຳນົດຄວາມຮັບຜິດຊອບຕໍ່ຄວາມເສຍຫາຍ ທີ່ເນື່ອງມາຈາກສະພາວະຈຳເປັນຂອງຜູ້ລະເມີດ ແຕ່ຍັງບໍ່ໄດ້ກຳນົດກ່ຽວກັບ ຄວາມຮັບຜິດຊອບຂອງເຈົ້າກຳມະສິດໃນສະພາວະທີ່ຈຳເປັນຈຶ່ງເຫັນວ່າມີຄວາມຈຳເປັນກຳນົດຂຶ້ນໃໝ່.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 262 ແລະ 171 ວັກ 2 ຂອງປະມວນກົດໝາຍແພ່ງ ຫວຽດນາມ ປີ 2005.
ມາດຕາອ້າງອີງ	ມາດຕາ 483 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 322 ການປົກປັກຮັກສາສິ່ງແວດລ້ອມ

ໃນການນຳໃຊ້ກຳມະສິດຂອງຕົນນັ້ນ ເຈົ້າກຳມະສິດ ຕ້ອງຮັບປະກັນ ແລະ ຄວບຄຸມບໍ່ໃຫ້ສ້າງຜົນກະທົບຕໍ່ສິ່ງແວດລ້ອມ ເຊັ່ນ ພາໃຫ້ເກີດມົນລະພິດ, ສານເຄມີທີ່ເປັນພິດ, ທາດກຳມັນຕະພາບລັງສີ, ຄວາມສັ່ນສະເທືອນ, ແສງ, ສີ, ສຽງ ແລະ ກິ່ນ ຊຶ່ງຈະພາໃຫ້ເປັນອັນຕະລາຍຕໍ່ສຸຂະພາບ, ຊີວິດ ແລະ ຊັບສິ່ງຂອງ ຂອງບຸກຄົນອື່ນຫຼື ເປັນຜົນກະທົບຕໍ່ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ.

ໃນກໍລະນີທີ່ສ້າງຄວາມເສຍຫາຍໃຫ້ແກ່ສິ່ງແວດລ້ອມ,ຜູ້ກໍຄວາມເສຍຫາຍ ຕ້ອງຢຸດເຊົາການກະທຳຂອງຕົນໂດຍທັນທີ ແລະ ຮັບຜິດຊອບຕໍ່ຄວາມເສຍຫາຍທີ່ຕົນໄດ້ກໍຂຶ້ນ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນວ່າ ພັນທະຂອງເຈົ້າກຳມະສິດຕໍ່ສິ່ງແວດລ້ອມ.
ຕົວຢ່າງ	**1. ກ** ເຮັດຟາມລ້ຽງໄກ່ພັນໄຂ່ **ກ** ຕ້ອງຮັບປະກັນຄວາມສະອາດໂດຍບໍ່ໃຫ້ມີກິ່ນເໝັນໃຫ້ບຸກຄົນອື່ນທີ່ຢູ່ໃກ້ຄຽງ, ກໍລະນີທີ່ເກີດມີກິ່ນເໝັນຮຸນແຮງທີ່ບໍ່ສາມາດແກ້ໄຂໄດ້ແລ້ວນັ້ນ **ກ** ຕ້ອງໄດ້ຢຸດເຊົາການດຳເນີນກິດຈະການດັ່ງກ່າວ. **2. ຂ** ເຮັດໂຮງງານຟອກຜ້າ ຕ້ອງເຮັດອ່າງບຳບັດນ້ຳເສຍແລ້ວຈຶ່ງປ່ອຍນ້ຳສະອາດສູ່ທຳມະຊາດກໍລະນີທີ່ນ້ຳເປື້ອນຫາກໄຫຼລົງໄປທົ່ງນາທີ່ຢູ່ໃກ້ຄຽງ ແລ້ວເຮັດໃຫ້ປົນເປື້ອນນັ້ນ **ກ** ກໍຕ້ອງໄດ້ຮັບຜິດຊອບຕໍ່ການໃຊ້ແທນຄວາມເສຍຫາຍທີ່ເກີດຂຶ້ນ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 23 ກົດໝາຍວ່າດ້ວຍ ການປົກປັກຮັກສາສິ່ງແວດລ້ອມບັນຫາສິ່ງແວດລ້ອມ ເນື່ອງຈາກວ່າ ມີທ່າອ່ຽງເພີ່ມຂຶ້ນໃນອະນາຄົດ ຍ້ອນການພັດທະນາດ້ານເສດຖະກິດຢູ່ປະເທດເຮົາ ເຊັ່ນ: ການສ້າງຕັ້ງໂຮງຈັກ, ໂຮງງານ ຊຶ່ງຈະນຳໄປສູ່ການປ່ອຍນ້ຳເສຍ, ການສ້າງມຸນລະພິດຕ່າງໆ, ແຕ່ກົດໝາຍແພ່ງສະບັບປັດຈຸບັນ ຍັງບໍ່ທັນກຳນົດໃສ່. ສະນັ້ນ, ການກຳນົດໃສ່ໃໝ່ຈຶ່ງມີຄວາມຈຳເປັນ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 263 ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2005; ມາດຕາ 172 ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2015.

ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 323 ການກຳນົດເຂດແດນ

ເຂດແດນລະຫວ່າງຕອນດິນທີ່ຕິດຈອດກັນ ໃຫ້ກຳນົດດ້ວຍການຕົກລົງລະຫວ່າງເຈົ້າຂອງທີ່ດິນທີ່ຕິດຈອດກັນ ໂດຍມີການຢັ້ງຢືນຂອງຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມທີ່ກ່ຽວຂ້ອງ.

ຄ່າໃຊ້ຈ່າຍໃນການປັກຫຼັກໝາຍເຂດແດນຮ່ວມກັນ ໃຫ້ຮັບຜິດຊອບຄົນລະເຄິ່ງ ຫຼື ໃຫ້ປະຕິບັດຕາມທີ່ໄດ້ຕົກລົງກັນ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນກ່ຽວກັບວິທີ ການກຳນົດເຂດແດນຂອງຕອນດິນ. ລວມທັງການຮັບຜິດຊອບຕໍ່ຄ່າໃຊ້ຈ່າຍເພື່ອປັກຫຼັກໝາຍເຂດແດນຕາມການກຳນົດດັ່ງກ່າວ.
ຕົວຢ່າງ	**ກ** ມີທີ່ດິນຕິດກັບ **ຂ** ໂດຍບໍ່ທັນຮູ້ແຈ້ງກ່ຽວກັບເຂດແດນທີ່ແນ່ນອນ ເມື່ອສອງຝ່າຍຕ້ອງການປັກຫຼັກໝາຍເຂດແດນ ຕ້ອງປຶກສາຫາລືເອກະພາບກັນກ່ອນໂດຍມີການ ຈັດຕັ້ງກ່ຽວຂ້ອງເຂົ້າຮ່ວມນຳ ແລະ ຕ້ອງຮັບຜິດຊອບຮ່ວມກັນກ່ຽວກັບຄ່າໃຊ້ຈ່າຍໃນການກຳນົດເຂດແດນ, ເວັ້ນເສຍແຕ່ໃນກໍລະນີທີ່ຄູ່ກໍລະນີຫາກໄດ້ຕົກລົງກັນໂດຍໃຫ້ຄູ່ກໍລະນີຝ່າຍໃດຝ່າຍໜຶ່ງຮັບຜິດຊອບຄ່າໃຊ້ຈ່າຍທັງໝົດ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງໃໝ່ ເນື່ອງຈາກວ່າ: ປະເທດເຮົາທີ່ດິນສ່ວນຫຼາຍ ຍັງບໍ່ມີເຂດແດນຈະແຈ້ງ ພ້ອມກັນນັ້ນກໍບໍ່ມີຫຼັກການທີ່ເປັນເອກະພາບ ກ່ຽວກັບການແກ້ໄຂບັນຫາດັ່ງກ່າວ. ສະນັ້ນ, ຈຶ່ງກຳນົດມາດຕານີ້ເຂົ້າ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 223 ແລະ 224 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ; ມາດຕາ 265 ວັກ 1 ຂອງປະມວນກົດໝາຍແພ່ງຫວຽດນາມປີ 2005; ມາດຕາ 175 ແລະ 176 ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2015.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 324 ການລ້ອມຮົ້ວ

ເຈົ້າຂອງທີ່ດິນ ສາມາດລ້ອມຮົ້ວໃນຂອບເຂດທີ່ດິນຂອງຕົນ ແຕ່ບໍ່ໃຫ້ເປັນອຸປະສັກຕໍ່ການສັນຈອນຫຼື ລ່ວງເຂດແດນຂອງຕອນດິນທີ່ຢູ່ໃກ້ຄຽງ ແລະ ເຂດສະຫງວນຂອງທາງຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ໃນກໍລະນີທີ່ຕອນດິນນັ້ນມີທາງເຄີຍທຽວໄປມາກ່ອນເຈົ້າຂອງທີ່ດິນໄດ້ສິດນຳໃຊ້ທີ່ດິນ ຕ້ອງຈົ່ງທາງທຽວທີ່ເໝາະສົມ ຫຼື ປ່ຽນແລວທາງທີ່ເຄີຍທຽວໄປທາງອື່ນ ແລ້ວຈຶ່ງລ້ອມຮົ້ວໄດ້ ແຕ່ຕ້ອງໃນຕອນ ດິນດັ່ງກ່າວ.

ຈຸດປະສົງ	ເພື່ອກຳນົດກ່ຽວກັບ ສິດ ແລະ ພັນທະ ຂອງເຈົ້າກຳມະສິດໃນການລ້ອມຮົ້ວ.
ຕົວຢ່າງ	**1. ກ** ແລະ **ຂ** ມີທີ່ດິນຕິດກັນ **ກ** ຕ້ອງການລ້ອມຮົ້ວ ໂດຍ **ຂ** ບໍ່ເຫັນດີ ແຕ່ **ກ** ກໍສາມາດລ້ອມຮົ້ວ ໃນເຂດແດນຂອງຕົນ ແຕ່ການລ້ອມຮົ້ວນັ້ນ ບໍ່ໃຫ້ເປັນອຸປະສັກ ຕໍ່ການສັນຈອນບົນຖະໜົນຫົນທາງ ຫຼື ກີດຂວາງທາງທີ່ເຄີຍທຽວໄປ-ມາຜ່ານດິນຕອນດັ່ງກ່າວ ຫຼື ລ່ວງເຂດແດນຂອງຕອນດິນທີ່ຢູ່ໃກ້ຄຽງ.

	2. ກ ແລະ **ຂ** ສາມາດຕົກລົງເພື່ອຮັບຜິດຊອບຄ່າໃຊ້ຈ່າຍຮ່ວມກັນໃນການເຮັດຮົ້ວເຂດແດນລະຫ່ວາງຕອນດິນຂອງ **ກ** ແລະ ຕອນດິນຂອງ **ຂ.** ໃນກໍລະນີ, ຖ້າຫາກບໍ່ສາມາດຢັ້ງຢືນໄດ້ວ່າພວກເຂົາເຫັນດີກ່ຽວກັບກຳມະສິດຂອງການລ້ອມຮົ້ວ, ຮົ້ວດັ່ງກ່າວເຊື່ອວ່າເປັນກຳມະສິດຂອງ **ກ** ແລະ **ຂ** ຮ່ວມກັນ (ມາດຕາ 325 ຂອງປະມວນກົດໝາຍແພ່ງ). **3. ກ** ມີດິນຕອນໜຶ່ງທີ່ຕິດກັບທີ່ດິນ **ຂ** ໂດຍໄດ້ຮັບທາງຜ່ານທີ່ດິນຂອງ **ກ** ອອກສູ່ທາງໃຫຍ່ ຕໍ່ມາ **ກ** ໄດ້ ລ້ອມຮົ້ວທີ່ດິນຂອງຜູ້ກ່ຽວ ແລະ **ກ** ກໍໄດ້ຮັກສາທາງຜ່ານໄວ້ຄືເກົ່າ.
ເຫດຜົນໃນການປັບປຸງ	ມາດຕານີ້ ປັບປຸງມາຈາກມາດຕາ 53 ຂອງກົດໝາຍວ່າດ້ວຍກຳມະສິດ ປີ 1990 ໃນປັດຈຸບັນ ຍັງບໍ່ທັນຄົບຖ້ວນ ບໍ່ກວມເອົາເນື້ອໃນທີ່ກຳນົດເຂົ້າ ເຊັ່ນ ຄວາມຮັບຜິດຊອບຂອງເຈົ້າກຳມະສິດໃນການລ້ອມຮົ້ວ, ການປົກສາຫາລືກັນເປັນເອກະພາບ, ວິທີການແກ້ໄຂ ເມື່ອມີຂໍ້ຂັດແຍ່ງເກີດຂຶ້ນ. ພ້ອມກັນນັ້ນ, ກໍໄດ້ປ່ຽນຄຳສັບ ເຈົ້າຂອງບ້ານ ຫຼື ເຈົ້າຂອງສວນອອກ ແລ້ວປ່ຽນເປັນຄຳວ່າ ເຈົ້າຂອງທີ່ດິນ ຂອງວັກ 1 ຂອງມາດຕາ 53 ຂອງກົດໝາຍວ່າດ້ວຍກຳມະສິດ ຍ້ອນວ່າເຈົ້າຂອງທີ່ດິນ ແມ່ນມີເນື້ອກ້ວາງຂວາງກວ່າກວມເອົາ: ເຈົ້າຂອງສິດນຳໃຊ້ທີ່ດິນ, ເຈົ້າຂອງສິດເໝືອທີ່ດິນ, ທາດສະພາບ ແລະ ບຸກຄົນອື່ນທີ່ໄດ້ສິດນຳໃຊ້ທີ່ດິນ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 225, 226, 227 ແລະ 228 ຂອງປະມວນກົດໝາຍແພ່ງຢີ່ປຸ່ນ; ມາດຕາ 176 ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2015.
ມາດຕາອ້າງອີງ	ມາດຕາ 320 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນຫຼື ປະເພນີສານ	ເຫັນວ່າ ການກຳນົດຫຼັກການດັ່ງກ່າວນີ້ໄວ້ແມ່ນຈະມີຄວາມສະດວກຂຶ້ນໃນການແກ້ໄຂຂໍ້ຂັດແຍ່ງທີ່ເກີດຂຶ້ນກ່ຽວກັບບັນຫານີ້.

ມາດຕາ 325 ກຳມະສິດຮ່ວມຂອງສິ່ງທີ່ຕັ້ງຢູ່ເຂດແດນ

ຮົ້ວ, ກຳແພງ, ຮ່ອງນ້ຳ ຫຼືຕົ້ນໄມ້ ທີ່ຢູ່ຕາມເຂດແດນ ໃຫ້ສັນນິຖານວ່າເປັນກຳມະສິດຮ່ວມລະຫວ່າງເຈົ້າຂອງທີ່ດິນທີ່ຕິດຈອດກັນນັ້ນ ແລະ ໃຫ້ປະຕິບັດຕາມຫຼັກການກ່ຽວກັບກຳມະສິດຮ່ວມ ຕາມທີ່ໄດ້ກຳນົດໄວ້ໃນປະມວນກົດໝາຍສະບັບນີ້, ເວັ້ນເສຍແຕ່ຫາກໄດ້ມີການພິສູດເປັນຢ່າງອື່ນ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນ ກ່ຽວກັບກຳມະສິດຂອງຊັບສິ່ງຂອງທີ່ມີ, ເກີດຂຶ້ນຕາມເສັ້ນເຂດແດນ.
ຕົວຢ່າງ	**1. ກ** ມີທີ່ດິນຕິດກັບ **ຂ** ມີຕົ້ນໄມ້ເກີດຂຶ້ນຢູ່ກາງເຂດແດນ ໂດຍບໍ່ຮູ້ວ່າແມ່ນຂອງໃຜ ໂດຍໃຫ້ສັນນິຖານກ່ອນວ່າ ຕົ້ນໄມ້ ແມ່ນກຳມະສິດຮ່ວມຂອງສອງຝ່າຍ. **2. ກ** ແລະ **ຂ** ໄດ້ລ້ອມຮົ້ວຢູ່ເຂດແດນຂອງດິນຂອງ **ກ** ແລະ **ຂ** ໂດຍຈ່າຍຄ່າລ້ອມຮົ້ວຮ່ວມກັນ. ແຕ່ຢູ່ໃນສັນຍາແມ່ນພວກເຂົາບໍ່ສາມາດຕົກລົງກັນໄດ້ກ່ຽວກັບກຳມະສິດຂອງຮົ້ວ. ໃນກໍລະນີນີ້, ໃຫ້ສັນນິຖານວ່າຮົ້ວເປັນກຳມະສິດຮ່ວມລະຫວ່າງ **ກ** ແລະ **ຂ.**
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງໃໝ່ ເນື່ອງຈາກວ່າ ຫຼັກການກ່ຽວກັບກຳມະສິດຮ່ວມຕໍ່ ຮົ້ວ, ກຳແພງ, ຮ່ອງນ້ຳ ຫຼືຕົ້ນໄມ້ທີ່ຢູ່ຕາມເຂດແດນຍັງບໍ່ທັນໄດ້ກຳນົດໄວ້ ແຕ່ໃນສະພາບຕົວຈິງຂອງບ້ານເຮົາທີ່ຢູ່ເຂດຊົນນະບົດເຂດແດນ ແມ່ນຍັງບໍ່ທັນມີການກຳນົດຈະແຈ້ງ ຊຶ່ງອາດມີບັນຫາກ່ຽວກັບຮົ້ວ, ກຳແພງ, ຮ່ອງນ້ຳ ຫຼືຕົ້ນໄມ້ທີ່ເກີດຂຶ້ນໃນບໍລິເວນດັ່ງກ່າວ.

	ມາດຕາ 324 ຂອງປະມວນກົດໝາຍແພ່ງ ໄດ້ກຳນົດໄວ້ວ່າສາມາດລ້ອມຮົ້ວໄດ້[ໃນເຂດທີ່ດິນຂອງຕົນ]ເທົ່ານັ້ນ, ກໍລະນີເຮັດກຳແພງທີ່ຕັ້ງຢູ່ເຂດແດນ, ກຳແພງດັ່ງກ່າວໃຫ້ສັນນິຖານວ່າ ເປັນກຳມະສິດຮ່ວມ ຕາມມາດຕາ 325 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 229 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ; ມາດຕາ 921 ຂອງປະມວນກົດໝາຍແພ່ງເຢຍລະມັນ;
ມາດຕາອ້າງອີງ	ມາດຕາ 323 ແລະ 324 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 326 ຂອບເຂດການປຸກສ້າງເຮືອນຫຼືການປູກຕົ້ນໄມ້

ບຸກຄົນໃດ ທີ່ໄດ້ຮັບສິດປຸກສ້າງເຮືອນຫຼືກໍ່ສ້າງອື່ນໆແລ້ວນັ້ນບໍ່ມີສິດເຮັດໃຫ້ນ້ຳຝົນຫຼືນ້ຳເປື້ອນໄຫຼ ຫຼື ຊຶມເຂົ້າທີ່ດິນທີ່ຕິດຈອດກັບຕົນ ລວມທັງບໍ່ໃຫ້ສາຍຄາເຮືອນຂອງຕົນລົ້ນກາຍໄປຫຼືກວມເອົາທີ່ດິນຫຼືເຮືອນຂອງບຸກຄົນອື່ນທີ່ຢູ່ໃກ້ຄຽງນັ້ນ.

ສຳລັບການປູກຕົ້ນໄມ້, ຕົ້ນໄມ້ກິນໝາກ, ຕົ້ນໄມ້ເປັນເຄືອຫຼືຕົ້ນໄມ້ປະເພດອື່ນໆນັ້ນກໍບໍ່ໃຫ້ກໍຄວາມເສຍຫາຍຫຼື ສ້າງຜົນກະທົບຕໍ່ເຈົ້າຂອງເຮືອນທີ່ຢູ່ໃກ້ຄຽງຫຼືກົດຂວາງການສັນຈອນໄປມາ.

ຈຸດປະສົງ	ເພື່ອກຳນົດຂອບເຂດ ສິດຂອງເຈົ້າກຳມະສິດໃນການປຸກສ້າງ, ປຸກຝັງໃນຂອບເຂດທີ່ດິນຂອງຕົນ.
ຕົວຢ່າງ	**1. ກ** ປຸກສ້າງເຮືອນຂອງຕົນ, ແຕ່ບໍ່ໃຫ້ສາຍຄາເຮືອນຂອງຕົນກວມເອົາທີ່ດິນ ຫຼື ເຮືອນຂອງ **ຂ** ຫຼື ບຸກຄົນອື່ນທີ່ຢູ່ໃກ້ຄຽງ. **2. ກ** ປູກຕົ້ນໄມ້ໃນເຂດທີ່ດິນຂອງ **ກ** ແຕ່ບໍ່ໃຫ້ຮາກໄມ້ ຫຼື ງ່າໄມ້ກວມໄປໃນເຂດແດນທີ່ດິນຂອງ **ຂ** ຫຼື ກໍຄວາມເສຍຫາຍໃຫ້ແກ່ບຸກຄົນອື່ນທີ່ຢູ່ໃກ້ຄຽງ ຫຼື ກົດຂວາງການສັນຈອນຂອງຜູ້ອື່ນ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 47 ກົດໝາຍວ່າດ້ວຍກຳມະສິດ ປີ 1990 ເນື່ອງຈາກວ່າ ຍ້ອນວ່າມາດໃນປັດຈຸບັນ ກຳນົດພຽງແຕ່ນ້ຳຝົນເທົ່ານັ້ນ ເຊິ່ງມັນຍັງບໍ່ທັນຄົບຖ້ວນ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ218 ແລະ 233 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ; ມາດຕາ 265, 269 ແລະ 270 ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2005, ມາດຕາດ250, 251ແລະ 252 ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2015.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 327 ສິດຂອງຜູ້ຖືກເສຍຫາຍຍ້ອນການນຳໃຊ້ກຳມະສິດໂດຍບໍ່ຖືກຕ້ອງ

ຜູ້ຖືກເສຍຫາຍເນື່ອງຈາກສາເຫດທີ່ໄດ້ກ່າວໄວ້ໃນມາດຕາ 326 ຂອງປະມວນກົດໝາຍສະບັບນີ້ ອາດຈະຂານງ່າໄມ້, ເຄືອໄມ້ຫຼືຕັດຮາກໄມ້ທີ່ລ່ວງກາຍເຂົ້າມາໃນທີ່ດິນຕົນກໍໄດ້ພາຍຫຼັງທີ່ໄດ້ແຈ້ງໃຫ້ເຈົ້າກຳມະສິດນັ້ນຊາບເຈັດວັນແລ້ວແຕ່ຜູ້ກ່ຽວກໍຍັງເມີນເສີຍຢູ່ ຫຼື ຜູ້ຖືກເສຍຫາຍຈະດຳເນີນການປົກປ້ອງສິດຕາມທີ່ໄດ້ກຳນົດໄວ້ໃນມາດຕາ 336 ຂອງປະມວນກົດໝາຍສະບັບນີ້ກໍໄດ້.

ນອກຈາກນີ້ແລ້ວຜູ້ຖືກເສຍຫາຍ ຍັງມີສິດຮ້ອງຂໍເອົາການໃຊ້ແທນຄ່າເສຍຫາຍນັ້ນອີກດ້ວຍ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນ ກໍລະນີມີການປຸກສ້າງເຮືອນ ກໍຄືການນຳໃຊ້ທີ່ດິນໂດຍບໍ່ປະຕິບັດຕາມທີ່ກຳນົດໄວ້ໃນມາດຕາ 326 ແລ້ວເຮັດໃຫ້ເຈົ້າ ຂອງສິດນຳໃຊ້ທີ່ດິນຕອນໃກ້ຄຽງພົບຄວາມເສຍຫາຍ.
ຕົວຢ່າງ	**1. ກ** ໄດ້ປຸກສ້າງໂຮງແຮມໃສ່ທີ່ດິນຂອງຕົນ. ແຕ່ດ້ວຍທີ່ຕັ້ງ ແລະ ມຸມຂອງຫຼັງຄາອາຄານດັ່ງກ່າວ ມັນໄດ້ເຮັດໃຫ້ນ້ຳຝົນຕົກລົງໄປໃສ່ທີ່ດິນຂອງ **ຂ** ທີ່ຢູ່ທາງຂ້າງ. ກໍລະນີນີ້ **ຂ** ສາມາດທວງໃຫ້ **ກ** ຕັດສ່ວນທີ່ກາຍມາໃນທີ່ດິນຂອງຕົນນັ້ນອອກ. **2. ກ** ໄດ້ປຸກຕົ້ນໄມ້ໃສ່ທີ່ດິນຂອງຕົນ ແຕ່ຮາກ ແລະ ງ່າໄມ້ນັ້ນໄດ້ເດ່ກາຍໄປໃນເຂດດິນຂອງ **ຂ** ທີ່ຢູ່ຕິດກັນ. **ຂ** ໄດ້ທວງໃຫ້ **ກ** ຕັດ ຫຼື ຮານງ່າໄມ້ທີ່ກາຍເຂດແດນເຂົ້າມານັ້ນອອກ, ແຕ່ **ກ** ກໍບໍ່ສົນໃຈ, ພາຍຫຼັງທີ່ **ຂ** ໄດ້ແຈ້ງໄປແລ້ວພາຍໃນ 7 ວັນ, **ຂ** ສາມາດຕັດງ່າໄມ້ທີ່ກາຍເຂົ້າມາໃນເຂດຂອງຕົນນັ້ນຖິ້ມ ແລະ **ຂ** ຍັງສາມາດທວງເອົາຄ່າໃຊ້ຈ່າຍໃນການຕັດງ່າໄມ້ນັ້ນຈາກ **ກ** ໄດ້ອີກ.
ເຫດຜົນໃນການປັບປຸງ	ມາດຕານີ້ ປັບປຸງມາຈາກ ມາດຕາ 48 ກົດໝາຍວ່າດ້ວຍກຳມະສິດ ປີ 1990 ເຫັນວ່າເນື້ອ ໃນຂອງມາດຕາດັ່ງກ່າວ ຍັງສອດຄ່ອງກັບສະພາບຄວາມເປັນຈິງຂອງສັງຄົມໃນປັດຈຸບັນ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 265 ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2015; ມາດຕາ 233 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 326 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 328 ການອະນຸຍາດໃຫ້ມີທາງຜ່ານ, ການເນັ່ງສາຍໄຟຟ້າຜ່ານ

ບຸກຄົນໃດທີ່ມີເຮືອນຊຶ່ງຖືກປິດລ້ອມດ້ວຍເຮືອນຫຼືທີ່ດິນຊຶ່ງຜູ້ອື່ນມີສິດນຳໃຊ້ ໂດຍບໍ່ມີທາງຜ່ານອອກໄປສູ່ຫົນທາງໄດ້ ບຸກຄົນນັ້ນ ກໍມີສິດຮ້ອງຂໍທາງຜ່ານຈາກຜູ້ທີ່ມີສິດນຳໃຊ້ທີ່ດິນທີ່ຢູ່ໃກ້ຫົນທາງກວ່າໝູ່. ຜູ້ທີ່ມີສິດນຳໃຊ້ທີ່ດິນ ຊຶ່ງຖືກຮ້ອງຂໍນັ້ນ ຕ້ອງອະນຸຍາດໃຫ້ທາງຜ່ານ ແຕ່ມີສິດຮ້ອງຂໍເອົາການໃຊ້ແທນຄ່າເສຍຫາຍແກ່ຜົນລະປູກ ຫຼື ສິ່ງທີ່ກໍ່ສ້າງ ຈາກການນຳໃຊ້ທີ່ດິນເປັນທາງຜ່ານນັ້ນ ຕາມຄວາມເໝາະສົມ.

ໃນກໍລະນີທີ່ມີການເນັ່ງສາຍໄຟຟ້າ, ສາຍໂທລະສັບ ຫຼື ຂຸດຮ່ອງນ້ຳ, ວາງທໍ່ນ້ຳ, ທໍ່ນ້ຳປະປາຜ່ານທີ່ດິນຂອງຜູ້ທີ່ມີສິດນຳໃຊ້ບຸກຄົນໃດໜຶ່ງ ຊຶ່ງພາໃຫ້ຕົ້ນໄມ້ ຫຼື ຜົນລະປູກຕ່າງໆຂອງຜູ້ກ່ຽວຖືກທຳລາຍ ຫຼື ພາໃຫ້ມີຄວາມເສຍຫາຍແລ້ວ ບຸກຄົນນັ້ນ ກໍອາດຂໍເອົາຄ່າເສຍຫາຍທີ່ເນື່ອງຈາກການກະທຳນັ້ນກໍໄດ້. ຖ້າຜູ້ທີ່ມີສິດນຳໃຊ້ທີ່ດິນຫາກໄດ້ຮັບຜົນປະໂຫຍດນຳແລ້ວ ກໍຈະບໍ່ໃຫ້ຄິດໄລ່ຄ່າເສຍຫາຍນັ້ນອີກ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນກ່ຽວກັບ ສິດເຮັດໃຫ້ສາມາດນຳໃຊ້ທີ່ດິນຂອງຜູ້ອື່ນກໍລະນີທີ່ຕົນຖືກປິດລ້ອມດ້ວຍທີ່ດິນຂອງຄົນອື່ນ ໂດຍບໍ່ມີທາງຜ່ານອອກໄປສູ່ຫົນທາງ, ຫຼື ກໍລະນີທີ່ບໍ່ສາມາດເຊື່ອມຕໍ່ເອົາໄຟຟ້າ, ວາງທໍ່ນ້ຳ, ຂຸດຮ່ອງນ້ຳເສຍຊຶ່ງເປັນພື້ນຖານການດຳລົງຊີວິດ. ນອກນັ້ນ ຍັງໄດ້ກຳນົດໃຫ້ເຫັນກ່ຽວກັບການຫຼີກເວັ້ນຄວາມເສຍຫາຍແກ່ຜູ້ທີ່ໄດ້ຮັບຄວາມເສຍຫາຍຈາກການໃຫ້ທາງທຽວ, ການໃຫ້ກໍ່ສ້າງພື້ນຖານການດຳລົງຊີວິດ. ໝາຍວ່າເປັນມາດຕາທີ່ປັບສົມດຸນຂອງຄູ່ກໍລະນີ ເພື່ອໃຫ້ເທົ່າທຽມກັນ.
ຕົວຢ່າງ	**1. ກ** ມີທີ່ດິນໜຶ່ງຕອນບໍ່ມີທາງອອກໄປສູ່ຫົນທາງໃຫຍ່, ຖືກປິດລ້ອມດ້ວຍທີ່ດິນຂອງ **ຂ, ຄ** ແລະ **ງ**, ດັ່ງນັ້ນ **ກ** ຈຶ່ງຮ້ອງ ຂໍທາງຜ່ານນຳ **ຄ** ຜູ້ທີ່ມີສິດນຳໃຊ້ທີ່ດິນທີ່ຢູ່ໃກ້ຫົນທາງກວ່າໝູ່ໃນກໍລະນີນີ້ **ຄ** ຕ້ອງໄດ້ອະນຸຍາດໃຫ້ທາງຜ່ານໃຫ້ແກ່ **ກ,** ແຕ່ **ກ** ຕ້ອງໄດ້ຊົດເຊີຍ ຫຼື ໃຊ້ແທນຄ່າເສຍຫຼາຍ ຄື ຜົນລະປູກ ຫຼື ສິ່ງກໍ່ສ້າງ ໃຫ້ **ຄ** ຕາມຄວາມເໝາະສົມ.

	2. ດິນຂອງ **ກ** ຖືກປິດລ້ອມໂດຍຕອນດິນຂອງ **ຂ,**ຖ້າບໍ່ຜ່ານດິນຕອນດັ່ງກ່າວ ກໍຈະບໍ່ສາມາດເນັ່ງສາຍໄຟຟ້າໄດ້. **ກ** ມີສິດຂໍເນັ່ງສາຍໄຟຟ້າຜ່ານທີ່ດິນຂອງ **ຂ** ແຕ່ຕ້ອງໄດ້ຈ່າຍຄ່າເສຍຫາຍທີ່ເກີດຂຶ້ນ, ເວັ້ນເສຍແຕ່ **ຂ** ນັ້ນຫາກໄດ້ຮັບຜົນປະໂຫຍດໂດຍກົງນຳ **ກ** ເທົ່ານັ້ນ.
ເຫດຜົນໃນການປັບປຸງ	ມາດຕານີ້ ປັບປຸງມາຈາກ ມາດຕາ 49 ຂອງກົດໝາຍວ່າດ້ວຍກຳມະສິດ ປີ 1990: ປັບປຸງຊື່ມາດຕາ ແມ່ນຈາກຄຳວ່າ ການອະນຸຍາດໃຫ້ມີທາງຜ່ານໄປ ເປັນການອະນຸຍາດໃຫ້ມີທາງ, ການເນັ່ງສາຍໄຟຟ້າຜ່ານ ແມ່ນມີຄວາມຈຳເປັນ ເພື່ອໃຫ້ກວມເອົາເນື້ອໃນຂອງສອງວັກ.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງຂອງປະເທດອື່ນ	ມາດຕາ 210, 211, 212 ແລະ 213 ຂອງປະມວນກົດໝາຍແພ່ງ ຍີ່ປຸ່ນ; ມາດຕາ 254 ແລະ 255 ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2015.
ມາດຕາອ້າງອີງ	ມາດຕາ 338 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນຫຼື ປະເພນີສາມ	ສືບຕໍ່ຄົ້ນຄວ້າ.

ມາດຕາ 329 ການອະນຸຍາດໃຫ້ນ້ຳຮ່ອງໄຫຼຜ່ານ

ບຸກຄົນໃດທີ່ມີຄວາມຈຳເປັນໃນການເປັ່ງນ້ຳອອກຈາກທີ່ດິນທີ່ຕົນຢູ່ກໍມີສິດຮ້ອງຂໍຂຸດຮ່ອງເປັ່ງນ້ຳຜ່ານທີ່ດິນຂອງຜູ້ທີ່ຢູ່ລຸ່ມຖັດຕົນຫຼື ຜູ້ທີ່ຢູ່ໃກ້ຄອງນ້ຳ. ຜູ້ທີ່ຖືກຮ້ອງຂໍກໍຕ້ອງອະນຸຍາດໃຫ້ຂຸດຮ່ອງເປັ່ງນ້ຳແຕ່ມີສິດຮ້ອງຂໍເອົາຄ່າເສຍຫາຍແກ່ຜົນລະປູກຫຼືສິ່ງທີ່ປູກສ້າງຈາກການຂຸດຮ່ອງເປັ່ງນ້ຳນັ້ນ. ຜູ້ຮ້ອງຂໍຂຸດຮ່ອງເປັ່ງນ້ຳຕ້ອງຮັກສາອະນາໄມແລະສະພາບຂອງຮ່ອງນ້ຳໃຫ້ເໝາະສົມ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນສິ່ງອຳນວຍຄວາມສະດວກ ໃຫ້ບຸກຄົນທີ່ບໍ່ມີບ່ອນລະບາຍນ້ຳ ອອກສູ່ຮ່ອງລະບາຍ ຖ້າບໍ່ນຳໃຊ້ດິນຕອນລຸ່ມທີ່ຢູ່ຖັດໄປ ຫຼື ດິນຕອນທີ່ໃກ້ກັບ ຮ່ອງລະບາຍ.
ຕົວຢ່າງ	**ກ** ມີສິດຮ້ອງຂໍຂຸດຮ່ອງເປັ່ງນ້ຳຜ່ານທີ່ດິນຂອງ **ຂ** ຜູ້ທີ່ຢູ່ລຸ່ມຖັດໄປ ຫຼື ຜູ້ທີ່ຢູ່ ໃກ້ຮ່ອງລະບາຍນ້ຳ ແຕ່ **ຂ** ມີສິດຂໍຄ່າເສຍຫາຍທີ່ເກີດຂຶ້ນ. **ກ** ມີພັນທະຮັກສາ ຄວາມສະອາດ ແລະ ຮັກສາຮ່ອງນ້ຳບໍ່ໃຫ້ມີກິ່ນເໝັນ.
ເຫດຜົນໃນການປັບປຸງ	ມາດຕານີ້ ປັບປຸງມາຈາກ ມາດຕາ 50 ກົດໝາຍວ່າດ້ວຍກຳມະສິດ ປີ 1990 ເຫັນວ່າເນື້ອໃນຂອງມາດຕາດັ່ງກ່າວ ຍັງສອດຄ່ອງກັບສະພາບຄວາມເປັນຈິງ ຂອງສັງຄົມໃນປັດຈຸບັນ.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງ ຂອງປະເທດອື່ນ	ມາດຕາ 220 ແລະ 221 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 338 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນຫຼື ປະເພນີສາມ	ສືບຕໍ່ຄົ້ນຄວ້າ.

ມາດຕາ 330 ໄລຍະຫ່າງໃນການປຸກສ້າງເຮືອນ, ການກໍ່ສ້າງອາຄານ

ການປຸກເຮືອນ, ການກໍ່ສ້າງອາຄານ ໃຫ້ຮັກສາໄລຍະຫ່າງຢ່າງໜ້ອຍຫ້າສິບຊັງຕິແມັດ ຈາກເຂດ ແດນ, ເວັ້ນເສຍແຕ່ກົດໝາຍໄດ້ກຳນົດໄວ້ເປັນຢ່າງອື່ນ.

ໃນກໍລະນີການກໍ່ສ້າງຫາກບໍ່ສອດຄ່ອງກັບບົດບັນຍັດເທິງນີ້, ເຈົ້າຂອງທີ່ດິນທີ່ຕິດຈອດກັນມີສິດທອງ ໃຫ້ຢຸດເຊົາ ແລະ ຮື້ຖອນສິ່ງກໍ່ສ້າງນັ້ນ.

ພາຍຫຼັງທີ່ກໍ່ສ້າງມາໄດ້ໜຶ່ງປີ ຫຼື ໄດ້ກໍ່ສ້າງສຳເລັດແລ້ວ ເຈົ້າຂອງທີ່ດິນທີ່ຕິດຈອດກັນ ມີສິດທອງ ເອົາໄດ້ພຽງແຕ່ຄ່າເສຍຫາຍເທົ່ານັ້ນ.

ຈຸດປະສົງ	ເພື່ອກຳນົດກ່ຽວກັບໄລຍະຫ່າງ ຂອງສິ່ງກໍ່ສ້າງ ໃນບໍລິເວັນເຂດແດນ.
ຕົວຢ່າງ	ເຮືອນຂອງ **ກ** ທີ່ກຳລັງປຸກສ້າງຢູ່ແມ່ນຫ່າງຈາກເຂດແດນຂອງ **ຂ** ທີ່ຢູ່ຕິດກັນພຽງແຕ່ 25 ຊັງຕິແມັດ. **ຂ** ສາມາດທວງໃຫ້ **ກ** ຢຸດເຊົ້າການກໍ່ສ້າງເຮືອນ ແລະ ໃຫ້ປຸກສ້າງໂດຍໃຫ້ຫ່າງອອກຈາກເຂດແດນ 50 ຊັງຕິແມັດ. ກໍລະນີທີ່ **ຂ** ບໍ່ທັນສັງເກດດີເຮັດໃຫ້ການປຸກສ້າງເຮືອນຂອງ **ກ** ສຳເລັດໄປກ່ອນນັ້ນ, **ຂ** ສາມາດເຮັດໄດ້ພຽງແຕ່ທວງເອົາຄ່າເສຍຫາຍຈາກ **ກ** ເທົ່ານັ້ນ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ ສ້າງໃໝ່ປັດຈຸບັນການປຸກສ້າງເຮືອນ, ອາຄານຢູ່ບ້ານເຮົາແມ່ນເກີດຂຶ້ນຢ່າງຫຼວງຫຼາຍ ໂດຍສະເພາະໃນເຂດຊຸມຊົນໝາແໜ້ນ. ການກຳນົດມາດຕານີ້ເຂົ້າໃໝ່ ຈະຊ່ວຍໃຫ້ສິ່ງກໍ່ສ້າງ ມີໄລຍະຫ່າງອັນເໝາະສົມ ເພື່ອຮັກສາສະພາບແວດລ້ອມ, ອາກາດ, ຄວາມເປັນລະບຽບຮຽບร้อย, ສະດວກໃນເວລາສ້ອມແປງ. ສະນັ້ນ, ການກຳນົດມາດຕານີ້ ເຂົ້າໃສ່ຈະມີຜົນດີ ແລະ ເປັນພື້ນຖານໃຫ້ແກ່ການແກ້ໄຂຂໍ້ຂັດແຍ່ງ ທີ່ອາດເກີດຂຶ້ນໃນອະນາຄົດຕື້ມ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 234 ຂອງປະມວນກົດໝາຍແພ່ງ ຍີ່ປຸ່ນ.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 331 ການຂໍອະນຸຍາດນຳໃຊ້ຕອນດິນທີ່ຕິດຈອດກັນ

ເຈົ້າຂອງທີ່ດິນ ສາມາດຂໍອະນຸຍາດນຳໃຊ້ຕອນດິນທີ່ຕິດຈອດກັນນັ້ນ ເພື່ອທຳການກໍ່ສ້າງ, ສ້ອມແປງ, ບູລະນະເຮືອນ, ອາຄານ, ຮົ້ວ, ກຳແພງ ຫຼື ສິ່ງກໍ່ສ້າງອື່ນຂອງຕົນ ເມື່ອເຫັນວ່າມີຄວາມຈຳເປັນ.

ໃນກໍລະນີການນຳໃຊ້ນັ້ນ ຫາກກໍໃຫ້ເກີດຄວາມເສຍຫາຍ ຕ້ອງໄດ້ສ້ອມແປງຄືນ ຫຼື ໃຊ້ແທນຄ່າເສຍຫາຍ.

ຈຸດປະສົງ	ເພື່ອກຳນົດໃຫ້ສາມາດນຳໃຊ້ດິນ ທີ່ຕິດຈອດກັນໄດ້ຢ່າງມີຜົນເຕັມສ່ວນ, ໂດຍການກຳນົດໃຫ້ເຫັນກ່ຽວກັບກໍລະນີທີ່ສາມາດນຳໃຊ້ດິນທີ່ຕິດຈອດກັນເພື່ອປຸກສ້າງຫຼືສ້ອມແປງອາຄານທີ່ຢູ່ໃນດິນຕົນ. ແລະກຳນົດກ່ຽວກັບການໃຊ້ແທນຄ່າເສຍຫາຍກໍລະນີທີ່ໄດ້ສ້າງຄວາມເສຍຫາຍແກ່ສິດນຳໃຊ້ທີ່ດິນ ແລະ ຕອນດິນຂອງດິນຕອນທີ່ຕິດຈອດກັນ.
ຕົວຢ່າງ	**ກ** ຈະກໍ ຫຼື ທາສີເຮືອນຂອງຕົນ. ທີ່ດິນຂອງຜູ້ກ່ຽວແຄບ ຈຳເປັນຕ້ອງນຳໃຊ້ທີ່ດິນຂອງ **ຂ** ເປັນບ່ອນວາງໄມ້ຄ້ຳແບບເສົາ ຫຼື ຫຼັກກ້ານ. ສະນັ້ນ, **ກ** ຈຶ່ງສະເໜີໃຫ້ **ຂ** ເພື່ອອະນຸຍາດໃຫ້ **ກ** ນຳໃຊ້ທີ່ດິນຂອງ **ຂ** ເປັນບ່ອນວາງໄມ້ຄ້ຳແບບ ຫຼື ອຸປະກອນກໍ່ສ້າງ ໃນກໍລະນີນີ້ **ຂ** ຕ້ອງໄດ້ອານຸຍາດໃຫ້ **ກ** ນຳໃຊ້ພື້ນທີ່ດິນຂອງຕົນ,ແຕ່ຖ້າວ່າການນຳໃຊ້ທີ່ດິນຂອງ **ຂ** ນັ້ນ ຫາກໄດ້ສ້າງຄວາມເສຍຫາຍໃຫ້ **ຂ** ແລ້ວນັ້ນ **ກ** ຜູ້ນຳໃຊ້ຕ້ອງຮັບຜິດຊອບສ້ອມແປງຄືນສູ່ສະພາບປົກກະຕິ ຫຼື ໃຊ້ແທນຄ່າເສຍຫາຍ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງໃໝ່ ມີຄວາມຈຳເປັນ ແລະ ຈະຊ່ວຍໃຫ້ເຈົ້າຂອງທີ່ດິນທີ່ຕິດຈອດກັນ ບໍ່ສາມາດປະຕິເສດ ການຂໍອະນຸດຍາດນຳໃຊ້ທີ່ດິນຂອງຕົນໃນເວລາຈຳເປັນໄດ້ ແລະ ຈະຊ່ວຍແກ້ໄຂຂໍ້ຂັດແຍ່ງກ່ຽວກັບບັນຫານີ້ງ່າຍຂຶ້ນ. ພ້ອມກັນນັ້ນ, ການສ້ອມແປງອາຄານທີ່ຢູ່ອາໃສໃນເຂດຕົວເມືອງໃຫຍ່, ເຂດຊຸມຊົນແອອັດ ແມ່ນມີຄວາມຫຍຸ້ງຍາກ ຫຼື ບໍ່ສາມາດບັນລຸຈຸດປະສົງຂອງຕົນໄດ້ ຖ້າຫາກວ່າ ບໍ່ໄດ້ຮັບອະນຸຍາດຈາກເຈົ້າກຳມະສິດທີ່ດິນທີ່ຕິດຈອດກັນ.

ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 209 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 332 ການຂຸດນ້ຳສ້າງ, ສະນ້ຳ, ເຈາະນ້ຳບາດານ

ເຈົ້າຂອງທີ່ດິນ ສາມາດຂຸດນ້ຳສ້າງ, ສະນ້ຳ, ເຈາະນ້ຳບາດານ ໃນທີ່ດິນຂອງຕົນໄດ້ ແຕ່ໃຫ້ຫ່າງຈາກເຂດແດນ ຢ່າງໜ້ອຍ ສອງແມັດຂຶ້ນໄປ ແລະ ຕ້ອງຮັບປະກັນບໍ່ໃຫ້ດິນເຈື່ອນ ຫຼື ຍຸບລົງ ຊຶ່ງອາດກະທົບຕໍ່ຕອນດິນທີ່ຕິດຈອດກັນ.

ໃນກໍລະນີທີ່ການຂຸດ ຫຼື ເຈາະດັ່ງກ່າວ ຫາກໄດ້ກໍຄວາມເສຍຫາຍໃຫ້ແກ່ຊັບສິນຂອງບຸກຄົນອື່ນ ຕ້ອງຢຸດເຊົາການກະທຳຂອງຕົນທັນທີ ພ້ອມທັງສ້ອມແປງ ໃຫ້ຄືນສູ່ສະພາບເດີມ ຫຼື ໃຊ້ແທນຄ່າເສຍຫາຍທີ່ຕົນໄດ້ກໍຂຶ້ນ.

ຈຸດປະສົງ	ເພື່ອກຳນົດກ່ຽວກັບ ສິດ ແລະ ພັນທະ ຂອງເຈົ້າກຳມະສິດ ກ່ຽວກັບການຂຸດນ້ຳສ້າງ, ສະນ້ຳ, ເຈາະນ້ຳບາດານ.
ຕົວຢ່າງ	**ກ** ມີສິດຂຸດນ້ຳສ້າງ , ເຈາະນ້ຳບາດານໃນເຂດແດນຂອງຕົນ, ແຕ່ **ກ** ຕ້ອງຂຸດໃຫ້ຫ່າງຈາກເຂດແດນຢ່າງໜ້ອຍ ສອງແມັດແລະ ຕ້ອງຮັບປະກັນບໍ່ໃຫ້ດິນເຈື່ອນ ຫຼື ຍຸບລົງ ຊຶ່ງອາດຈະກະທົບຕໍ່ຕອນດິນທີ່ຕິດຈອດກັນນັ້ນ, ໃນກໍລະນີຫາກມີຄວາມເສຍຫາຍ ທີ່ເກີດຈາກການຂຸດ ຫຼື ເຈາະ ຂອງ **ກ** ແລ້ວ **ກ** ຕ້ອງຢຸດເຊົາ ແລະ ຮັບຜິດຊອບຄ່າເສຍຫາຍທີ່ເກີດຂຶ້ນ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ ແມ່ນສ້າງໃໝ່ເຫັນວ່າການຂຸດນ້ຳສ້າງ, ສະນ້ຳ, ໝອງປາ ແລະ ເຈາະບານດານ ຂອງເຈົ້າກຳມະສິດທີ່ດິນ ແມ່ນເກີດມີຜົນເສຍຫາຍຕໍ່ທີ່ດິນທີ່ຢູ່ໃກ້ຄຽງ, ຜ່ານມາເຈົ້າຂອງທີ່ດິນ ທີ່ກໍຄວາມເສຍຫາຍແມ່ນບໍ່ໄດ້ຮັບຜິດຊອບດັ່ງນັ້ນ ຈຶ່ງເຫັນຄວນກຳນົດມາດຕາດັ່ງກ່າວນີ້ໄວ້ໃນປະມວນແພ່ງ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 1342 ວັກ 1 ຂອງກົດໝາຍປະມວນແພ່ງ ແລະ ພານິດໄທ; ມາດຕາ 237 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ; ມາດຕາ 177 ວັກ 2 ຂອງປະມວນກົດໝາຍແພ່ງຫວຽດນາມປີ 2015.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ໝວດທີ 9
ການປົກປ້ອງກຳມະສິດ

ມາດຕາ 333 ການປົກປ້ອງກຳມະສິດ

ການປົກປ້ອງກຳມະສິດ ແມ່ນ ການນຳໃຊ້ມາດຕະການທີ່ໄດ້ກຳນົດໄວ້ໃນກົດໝາຍ ຕໍ່ບຸກຄົນທີ່ໄດ້ລະເມີດກ່ຽວກັບກຳມະສິດຂອງບຸກຄົນອື່ນ ເພື່ອຟື້ນຟູສິດ ແລະ ຜົນປະໂຫຍດ ທີ່ໄດ້ລະເມີດນັ້ນ ຄືນໃຫ້ເຈົ້າກຳມະສິດ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນ ກໍລະນີກຳມະສິດ ຖືກລະເມີດ ແມ່ນຈະຖືກປົກປ້ອງ ດ້ວຍມາດຕະການທີ່ແນ່ນອນ ຊຶ່ງມັນເປັນຜົນທາງກົດໝາຍ ທີ່ສຳຄັນທີ່ສຸດ ອັນໜຶ່ງຂອງການມີກຳມະສິດ.
ຕົວຢ່າງ	**ກ** ມີທີ່ດິນຕອນໜຶ່ງທີ່ຢູ່ຕິດກັບທີ່ດິນຂອງ **ຂ,** ຕໍ່ມາ **ຂ** ໄດ້ທຳການບຸກລຸກທີ່ດິນ **ກ** ໂດຍໄດ້ຍັບເຂດແດນເຂົ້າມາໃນທີ່ດິນຂອງ **ກ** ໃນເມື່ອ **ກ** ຮູ້ວ່າ **ຂ** ໄດ້ຍັບເຂົ້າມາກວມເອົາທີ່ດິນຂອງຜູ້ກ່ຽວ, **ກ** ຈຶ່ງໄດ້ທວງໃຫ້ **ຂ** ຍັບເຂດແດນກັບຄືນໃຫ້ຢູ່ໃນສະພາບເດີມ, ຖ້າວ່າ **ຂ** ບໍ່ໃຫ້ການຮ່ວມມື ຫຼື ບໍ່ຍອມ **ກ** ກໍສາມາດທຳການຮ້ອງຟ້ອງໄປຫາສານ ເພື່ອທວງເອົາສິດຂອງຕົນຄືນ.
ເຫດຜົນໃນການຮັກສາ ເນື້ອໃນເດີມ	ມາດຕານີ້ຮັກສາເນື້ອໃນຂອງ ມາດຕາ 56 ກົດໝາຍວ່າດ້ວຍ ກຳມະສິດ 1990 ປີ ເພາະວ່າເນື້ອໃນຂອງມາດຕາດັ່ງກ່າວ ຍັງສອດຄ່ອງກັບສະພາບຄວາມເປັນຈິງ ຂອງສັງຄົມເຮົາ ຈຶ່ງບໍ່ໄດ້ມີການປັບປຸງ ແລະ ຍັງຮັກສາເນື້ອໃນ ໄວ້ຄືເກົ່າທັງໝົດ.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງ ຂອງປະເທດອື່ນ	ກົດໝາຍປະເທດອື່ນເຊັ່ນ ປະມວນກົດໝາຍແພ່ງຢີ່ປຸ່ນ ບໍ່ໄດ້ກຳນົດໄວ້. ປະມວນ ກົດໝາຍແພ່ງເຢຍລະມັນກຳນົດມາດຕະການ ເພື່ອປົກປ້ອງກຳມະສິດ ໂດຍ ລະອຽດ.
ມາດຕາອ້າງອີງ	ມາດຕາ 243,244 ວັນ2, 246, 334,335, 336 ແລະ 337 ຂອງປະມວນ ກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 334 ການທວງເອົາຊັບສິ່ງຂອງຄືນ

ເຈົ້າກຳມະສິດ ມີສິດທວງເອົາຊັບສິ່ງຂອງຂອງຕົນ ຄືນຈາກບຸກຄົນທີ່ຄອບຄອງ ໂດຍບໍ່ມີພື້ນຖານ ທາງດ້ານກົດໝາຍ.

ສຳລັບການທວງເອົາໝາກຜົນ, ຄ່າໃຊ້ຈ່າຍ, ຄ່າເສຍຫາຍ ຈາກການຄອບຄອງຊັບສິ່ງຂອງນັ້ນ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນມາດຕາ 241 ຫາ ມາດຕາ 244 ຂອງປະມວນກົດໝາຍສະບັບນີ້.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນກ່ຽວກັບການປົກປ້ອງກຳມະສິດ ໃນກໍລະນີທີ່ຖືກບຸກຄົນ ອື່ນ ຍາດຊິງເອົາການຄອບຄອງ ຕໍ່ຊັບສິ່ງຂອງທີ່ຕົນມີກຳມະສິດ, ນອກນັ້ນການ ກຳນົດມາດຕານີ້ເຂົ້າໃໝ່ມີຄວາມສຳຄັນຕໍ່ການພັດທະນາທິດສະດີກົດໝາຍແພ່ງ ໂດຍສະເພາະ ການທວງເອົາຊັບສິ່ງຂອງ ຂອງເຈົ້າກຳມະສິດຄືນ.
ຕົວຢ່າງ	**1.** **ກ** ໄດ້ລັກເອົາລົດຈັກຂອງ **ຂ** ແລ້ວນຳໄປຂາຍໃຫ້ **ຄ** ໃນລາຄາຖືກ ຊຶ່ງ **ຄ** ເອງກໍຮູ້ຢູ່ແລ້ວວ່າລົດຈັກຄັນດັ່ງກ່າວ ອອກຊື່ **ຂ** ບໍ່ແມ່ນຂອງ **ກ** . ກໍລະນີນີ້ **ຂ** ສາມາດທວງໃຫ້ **ຄ** ສົ່ງລົດຈັກຄັນດັ່ງນັ້ນຄືນໃຫ້ຕົນ ຕາມມາດຕາ 334 ວັກ 1, ເຖິງວ່າ **ຄ** ຈະໄດ້ສ້ອມແປງ ລົດຈັກ ໃນສ່ວນທີ່ເປ່ເພໄປແລ້ວກໍຕາມ, ແຕ່ **ຄ** ບໍ່ສາມາດທວງເອົາຄ່າສ້ອມແປງຈາກ **ຂ** ແຕ່ຢ່າງໃດ ຕາມມາດຕາ 334 ວັກ 2 ແລະ 242 ວັກ 3 ຂອງປະມວນກົດໝາຍແພ່ງ. **2.** ຕໍ່ຈາກ ຕົວຢ່າງ **1** ພາຍຫຼັງທີ່ **ຄ** ຊື້ໄດ້ລົດຈັກຄັນດັ່ງກ່າວຈາກ **ກ** ແລະ **ຄ** ກໍໄດ້ນຳເອົາລົດຈັກຄັນນັ້ນໄປໃຫ້ **ງ** ເຊົ່າໃນລາຄາເດືອນລະ 400.000 ກີບ, ເມື່ອ **ຂ** ຮູ້ວ່າລົດຈັກຄັນທີ່ເສຍນັ້ນຢູ່ນຳ **ຄ** ແລ້ວ **ຂ** ຈຶ່ງທວງເອົາລົດຈັກ ແລະ ເງິນທີ່ເປັນຄ່າເຊົ່າລົດຄືນ ຕາມມາດຕາ 334 ແລະ 241 ຂອງປະມວນ ກົດໝາຍແພ່ງ.

ເຫດຜົນໃນການປັບປຸງ	ມາດຕານີ້ ປັບປຸງມາຈາກກົດໝາຍວ່າດ້ວຍກຳມະສິດ ປີ 1990 ຍັງບໍ່ທັນກຳນົດ ຈະແຈ້ງເທົ່າທີ່ຄວນ ແລະ ການທີ່ກຳນົດມາດຕານີ້ເຂົ້າໃໝ່ ກໍເພື່ອໃຫ້ສອດຄ່ອງ ກັບກົດໝາຍຫຼາຍປະເທດໂດຍໄດ້ຄົ້ນຄວ້າມາດຕາ 57, 66 ແລະ 67 ຂອງ ກົດໝາຍວ່າດ້ວຍກຳມະສິດ ປີ 1990 ມາປັບປຸງໃຫ້ສອດຄ່ອງ.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງ ຂອງປະເທດອື່ນ	ມາດຕາ 985 ຂອງປະມວນກົດໝາຍແພ່ງເຢຍລະມັນ.
ມາດຕາອ້າງອີງ	ມາດຕາ 241, 242, 243,244, 335 ແລະ 481 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 335 ການທວງໃຫ້ຮັບຮູ້ກຳມະສິດ

ເມື່ອຫາກມີບຸກຄົນໃດບຸກຄົນໜຶ່ງ ໄດ້ໂຕ້ແຍ່ງເອົາສິດກ່ຽວກັບຊັບສິ່ງຂອງຂອງຕົນແລ້ວ ເຖິງວ່າ ສິດຄອບຄອງຊັບສິ່ງຂອງນັ້ນ ຍັງບໍ່ທັນໄດ້ຖືກລະເມີດກໍຕາມ, ເຈົ້າກຳມະສິດ ກໍມີສິດຮ້ອງຟ້ອງຕໍ່ສານ ເພື່ອ ໃຫ້ຮັບຮູ້ສິດກ່ຽວກັບຊັບສິ່ງຂອງຂອງຕົນນັ້ນ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນກໍລະນີທີ່ມີບຸກໃດບຸກຄົນໜຶ່ງ ໄດ້ມາໂຕ້ແຍ່ງເອົາກຳມະສິດ ກໍຄືສິດອື່ນໆຂອງຕົນນັ້ນ ເຈົ້າກຳມະສິດມີສິດ ທວງໃຫ້ ຮັບຮູ້ກ່ຽວກັບກຳມະສິດ ຂອງຕົນ,ເຖິງວ່າສິດຄອບຄອງ ຍັງບໍ່ທັນຖືກລະເມີດເທື່ອກໍຕາມ, ດ້ວຍເຫດນີ້ກຳ ມະສິດຂອງຜູ້ກ່ຽວກໍຈະໄດ້ຮັບການປົກປ້ອງ.
ຕົວຢ່າງ	**ກ** ມີທີ່ດິນໜຶ່ງຕອນ ມີເນື້ອທີ່ 1 ເຮັດຕ່າ ຕິດກັບທີ່ດິນຂອງ **ຂ** ຕໍ່ມາ **ຂ** ໄດ້ລ້ອມ ຮົ້ວກວມເອົາທີ່ດິນຂອງ **ກ** ກວ້າງ 5 ແມັດ,ຍາວ 100 ແມັດ, ເມື່ອເປັນແນວນັ້ນ **ກ** ຈຶ່ງໄດ້ໄປທວງ ໃຫ້ **ຂ** ສົ່ງຄືນທີ່ດິນທີ່ **ຂ** ໄດ້ລ້ອມເອົານັ້ນຄືນໃຫ້ **ກ,** ແຕ່ຖ້າວ່າ **ຂ** ບໍ່ຍອມສົ່ງຄືນ **ກ** ມີສິດຮ້ອງຟ້ອງ ຕໍ່ສານ ເພື່ອຮັບຮູ້ສິດກ່ຽວກັບທີ່ດິນ ທີ **ຂ** ໄດ້ລ້ອມເອົາໄປແລ້ວນັ້ນຄືນ.
ເຫດຜົນໃນການຮັກສາເດີມ	ມາດຕານີ້ຮັກສາເດີມເນື້ອໃນ ມາດຕາ 62 ກົດໝາຍວ່າດ້ວຍ ກຳມະສິດ ປີ 1990 ເພາະເນື້ອໃນຂອງມາດຕາດັ່ງກ່າວ ຍັງສອດຄ່ອງກັບສະພາບຄວາມເປັນ ຈິງຂອງປະເທດ, ຂອງສັງຄົມເຮົາ ຈຶ່ງບໍ່ໄດ້ມີການປັບປຸງ ແລະ ຍັງຮັກສາເນື້ອ ໃນໄວ້ຄືເກົ່າທັງໝົດ.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງ ຂອງປະເທດອື່ນ	ມາດຕາ 256 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ເຢຍລະມັນ.
ມາດຕາອ້າງອີງ	ມາດຕາ 243, 246, 333, 334 ແລະ 336 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 336 ການທວງໃຫ້ຢຸດເຊົາການກີດຂວາງ ຫຼື ອຸປະສັກ

ເມື່ອມີບຸກຄົນໃດໜຶ່ງຫາກໄດ້ກໍໃຫ້ເກີດມີການກີດຂວາງຫຼືສ້າງອຸປະສັກໃດໜຶ່ງຕໍ່ການຄອບຄອງ, ນຳໃຊ້, ໄດ້ຮັບໝາກຜົນ ຫຼືຊີ້ຂາດ ກ່ຽວກັບຊັບທີ່ເປັນກຳມະສິດຂອງຕົນ, ເຈົ້າກຳມະສິດ ກໍມີສິດທວງໃຫ້ບຸກ ຄົນທີ່ສ້າງການກີດຂວາງ ຫຼື ອຸປະສັກນັ້ນ ຢຸດເຊົາການກີດຂວາງ ຫຼື ລົບລ້າງອຸປະສັກດັ່ງກ່າວນັ້ນໄດ້.

ສຳລັບການທວງເອົາໝາກຜົນ, ຄ່າໃຊ້ຈ່າຍ, ຄ່າເສຍຫາຍ ຈາກການກີດຂວາງ ຫຼື ອຸປະສັກນັ້ນ ໃຫ້ປະຕິບັດຕາມມາດຕາ 241 ຫາ ມາດຕາ 244 ຂອງປະມວນກົດໝາຍສະບັບນີ້.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນ ກ່ຽວກັບການປົກປ້ອງກຳມະສິດ ຂອງເຈົ້າກຳມະສິດ ເມື່ອ ມີບຸກຄົນອື່ນຫາກໄດ້ກີດຂວາງຕໍ່ກັບການຄອບຄອງ, ການນຳໃຊ້, ການໄດ້ຮັບ ໝາກຜົນ ແລະ ການຊີ້ຂາດຕໍ່ຊັບສິ່ງຂອງທີ່ເປັນກຳມະສິດຂອງຕົນ.

ຕົວຢ່າງ	**ກ** ໄດ້ຖອກດິນ ແລະ ຫີນ ໄວ້ຕໍ່ໜ້າເຮືອນຂອງ **ຂ** ຊຶ່ງເຮັດໃຫ້ການທຽວເຂົ້າ-ອອກ ເຮືອນຂອງ **ຂ** ພົບຄວາມຫຍຸ້ງຍາກ, **ຂ** ຈຶ່ງທວງໃຫ້ **ກ** ໂຍກຍ້າຍ ກອງດິນ ແລະ ຫີນ ດັ່ງກ່າວອອກຈາກໜ້າເຮືອນຂອງ **ຂ** ຕາມມາດຕາ 336. ໃນກໍລະນີ **ກ** ບໍ່ໂຍກຍ້າຍກອງດິນ ແລະ ຫີນ ດັ່ງກ່າວອອກຈາກໜ້າເຮືອນຂອງ **ຂ** ດັ່ງນັ້ນ **ຂ** ຈຶ່ງໄດ້ໄປຈ້າງລົດມາຕັກດິນ ແລະ ຊາຍກອງນັ້ນ ອອກຈາກໜ້າເຮືອນຂອງຕົນ ໃນລາຄາ 200.000 ກີບ ແລ້ວ **ຂ** ສາມາດຮຽກເອົາຄ່າໃຊ້ຈ່າຍດັ່ງກ່າວນັ້ນຄືນ ຈາກ **ກ.**
ເຫດຜົນໃນການປັບປຸງ	ມາດຕານີ້ ປັບປຸງມາຈາກ ມາດຕາ 63 ແມ່ນໄດ້ກຳນົດພຽງແຕ່ວັກທີໜຶ່ງເທົ່ານັ້ນ ແລະ ມາດຕາ 64 ຂອງກົດໝາຍວ່າດ້ວຍກຳມະສິດ ປີ 1990 ກໍກຳນົດມີ ລັກສະນະລວມໆ ເພື່ອກຳນົດເພີ່ມເຕີມກ່ຽວກັບການທວງເອົາການໃຊ້ແທນຄ່າ ເສຍຫາຍໃນກໍລະນີທີ່ມີການລະເມີດ ແລະ ຄວາມເສຍຫາຍໄດ້ເກີດຂຶ້ນແລ້ວ. ສະນັ້ນ ຈຶ່ງໄດ້ປັບປຸງຄືນໃໝ່ ໂດຍໄດ້ກຳນົດວັກທີ ສອງ ເຂົ້າຕື່ມ ເພື່ອໃຫ້ສິດ ແກ່ເຈົ້າກຳມະສິດໃນການປົກປ້ອງ ແລະ ໄດ້ຮັບການທົດແທນຄ່າເສຍຫາຍຕ່າງໆ ທີ່ເນື່ອງມາຈາກການກະ ທຳຂອງບຸກຄົນອື່ນ.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງ ຂອງປະເທດອື່ນ	ມາດຕາ 1004 ຂອງປະມວນກົດໝາຍແພ່ງເຢຍະມັນ.
ມາດຕາອ້າງອີງ	ມາດຕາ 243 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 337 ການປົກປ້ອງກຳມະສິດຈາກສິ່ງກີດຂວາງ ທີ່ຈະເກີດຂຶ້ນ

ເມື່ອເຫັນວ່າ ຈະມີໄພອັນຕະລາຍ ຊຶ່ງຈະກີດຂວາງ ຫຼື ຈະເປັນອຸປະສັກຕໍ່ຊັບສິ່ງຂອງຂອງຕົນ, ເຈົ້າກຳມະສິດ ກໍມີສິດທວງໃຫ້ເຈົ້າຂອງຊັບທີ່ເປັນສິ່ງກີດຂວາງ ຫຼື ເປັນອຸປະສັກນັ້ນ ນຳໃຊ້ມາດຕະການ ປ້ອງກັນຢ່າງເໝາະສົມ ແລະ ທັນການ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນວ່າ ເຈົ້າກຳມະສິດໄດ້ຮັບການປົກປ້ອງກຳມະສິດ ໂດຍສາ ມາດທວງໃຫ້ຜູ້ທີ່ຈະພາໃຫ້ເກີດມີການກີດຂວາງຕໍ່ຊັບສິ່ງຂອງທີ່ເປັນກຳມະສິດ ຂອງຕົນນັ້ນໃຫ້ຢຸດເຊົາການກະທຳທີ່ຈະເປັນອັນຕະລາຍ ຊຶ່ງອາດຈະເກີດຂຶ້ນ ໃນອານາຄົດ ພ້ອມທັງໃຊ້ມາດຕະການທີ່ເໝາະສົມ ເພື່ອເປັນການປົກປ້ອງບໍ່ ໃຫ້ເກີດຄວາມສ່ຽງທີ່ຈະລະເມີດກຳມະສິດ
ຕົວຢ່າງ	**ກ** ແລະ **ຂ** ມີທີ່ດິນຕິດກັນ ຊຶ່ງໄດ້ກໍ່ກຳແພງເປັນແດນກາງ, ໃນນັ້ນ **ກ** ໄດ້ປູກຕົ້ນຫູກວາງລຽບໄປຕາມແຄມຮົ້ວ ກຳແພງ, **ຂ** ເຫັນວ່າເມື່ອຕົ້ນໄມ້ຂອງ **ກ** ໃຫຍ່ຈະມີບັນຫາຄື ໃບໄມ້ຈະລົ່ນມາໃສ່ທີ່ດິນ ແລະ ເຮືອນຂອງຕົນ ແລ້ວກໍ ຈະເຮັດໃຫ້ຕົ້ນດອກໄມ້ຂອງ **ຂ** ຕາຍ, ດັ່ງນັ້ນ **ຂ** ຈຶ່ງໄດ້ໄປທັກທ້ວງໃຫ້ **ກ** ຢຸດການປູກຕົ້ນຫູກວາງໃສ່ແດນກາງ, ແລ້ວໃຫ້ **ກ** ປ່ຽນໄປປູກຕົ້ນໄມ້ສະນິດ ອື່ນແທນຕົ້ນຫູກວາງ ເພື່ອບໍ່ໃຫ້ມີບັນຫາໃນອານາຄົດ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງໃໝ່ຍ້ອນວ່າຜ່ານມາກົດໝາຍວ່າດ້ວຍກຳມະສິດຂອງປະເທດເຮົາ ແມ່ນຍັງບໍ່ທັນໄດ້ກຳນົດ ກ່ຽວກັບບັນຫານີ້ເທື່ອ ຊຶ່ງມາດຕາ 63 ຂອງກົດໝາຍ ວ່າດ້ວຍກຳມະສິດ ປີ 1990 ກໍກຳນົດພຽງແຕ່ການ ທວງໃຫ້ຢຸດເຊົາການ ກີດຂວາງ ຫຼື ອຸປະສັກ ເທົ່ານັ້ນ, ແຕ່ຍັງບໍ່ທັນກຳນົດການສ້າງສິ່ງກີດຂວາງທີ່ເປັນ ອັນຕະລາຍ ຊຶ່ງອາດຈະເກີດຂຶ້ນໃນຕໍ່ໜ້າ, ດັ່ງນັ້ນ ຈຶ່ງໄດ້ກຳນົດມາດຕານີ້ເຂົ້າຕື່ມ ເພື່ອສະກັດກັ້ນ ແລະ ປ້ອງກັນຄວາມເສຍຫາຍທີ່ອາດຈະເກີດຂຶ້ນ.
ຂໍ້ມູນກ່ຽວ ກັບ ປະ ມວນ ກົດ ໝາຍ ແພ່ງ ຂອງ ປະ ເທ ດ ອື່ນ	ມາດຕາ 1004 ຂອງ ປະ ມ ວ ນ ກົ ດ ໝ າ ຍ ແ ພ່ ງ ເ ຢ ຍ ະ ມ ັ ນ.

ມາດຕາອ້າງອີງ	ມາດຕາ 326, 327, 336 ແລະ 490 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 338 ການທວງເອົາການໃຊ້ແທນຄ່າເສຍຫາຍທີ່ເນື່ອງມາຈາກການນຳໃຊ້ ນ້ຳຫ້ວຍ, ນ້ຳໜອງຄອງບຶງ ຫຼື ເໝືອງຝາຍ

ເຈົ້າຂອງທີ່ດິນ ທີ່ເຄື່ອງປູກຂອງຝັ່ງ ຫຼື ເຂົ້ານາຕາກ້ຳຂອງຕົນໄດ້ຮັບຄວາມເສຍຫາຍ ເນື່ອງຈາກບຸກຄົນອື່ນໄດ້ເປັ່ງ ນ້ຳຫ້ວຍ, ນ້ຳໜອງຄອງບຶງ ຫຼື ເໝືອງຝາຍມາຖ້ວມ ຫຼື ໄດ້ຖົມ ຫຼື ຕັນນ້ຳດັ່ງກ່າວ ບໍ່ໃຫ້ໄຫຼລົງມາ ແລ້ວເຮັດໃຫ້ຜົນລະປູກຕ່າງໆຖືກເສຍຫາຍ ຫຼື ບໍ່ໄດ້ນຳໃຊ້ນ້ຳນັ້ນຢ່າງເປັນປົກກະຕິ ມີສິດທວງໃຫ້ຢຸດເຊົາການກະທຳຂອງຜູ້ກ່ຽວ ພ້ອມທັງຮ້ອງຂໍເອົາການໃຊ້ແທນຄ່າເສຍຫາຍ ຈາກຜູ້ທີ່ເປັ່ງ ຫຼື ຖົມ ຫຼື ຕັນນ້ຳນັ້ນ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນວ່າ ຜູ້ມີສິດນຳໃຊ້ທີ່ດິນເພື່ອທຳການປູກຝັງເຊັ່ນ: ປູກເຂົ້າ, ຜັກ ແລະ ອື່ນໆ ຫາກໄດ້ຮັບຄວາມເສຍຫາຍ ຈາກການທີ່ບຸກຄົນອື່ນນຳໃຊ້ຫ້ວຍ ນ້ຳໜອງຄອງບຶງ, ເໝືອງຝາຍ ແລ້ວຕັນທາງນ້ຳໄຫຼຂອງຫ້ວຍ, ໜອງຄອງບຶງ, ເໝືອງດັ່ງກ່າວນັ້ນ ແມ່ນສາມາດທວງໃຫ້ຜູ້ທີ່ກຳລັງກະທຳນັ້ນຢຸດເຊົາການກົດຂວາງດັ່ງກ່າວ, ລວມທັງສາມາດທວງໃຫ້ຊົດໃຊ້ຄວາມເສບຫາຍອີກກໍໄດ້.
ຕົວຢ່າງ	**ກ** ມີທີ່ດິນນາຢູ່ຕອນເທິງຂອງທີ່ດິນນາ **ຂ** ຊຶ່ງ **ຂ** ຈະທຳການຜະລິດປູກເຂົ້າໄດ້ນັ້ນ ກໍຕ້ອງໄດ້ອາໃສນ້ຳທີ່ໄຫຼຜ່ານທີ່ດິນຕອນເທິງກໍຄືທີ່ດິນຂອງ **ກ,** ຕໍ່ມາ **ກ** ໄດ້ຕັນ ຫຼື ອັດນ້ຳບໍ່ໃຫ້ໄຫຼລົງມາຫາທົ່ງນາຂອງ **ຂ** ເຮັດໃຫ້ຕົ້ນ ເຂົ້າຂອງ **ຂ** ເສຍຫາຍ, ດັ່ງນັ້ນ **ຂ** ຈຶ່ງໄດ້ທວງໃຫ້ **ກ** ຢຸດເຊົາການກະທຳ ດັ່ງກ່າວ, ຖ້າວ່າຕົ້ນເຂົ້າຂອງ **ຂ** ໄດ້ຮັບຄວາມເສຍຫາຍຍ້ອນຕົ້ນເຂົ້າຂາດນ້ຳ **ຂ** ກໍສາມາດຮ້ອງຂໍເອົາການໃຊ້ແທນຄ່າເສຍຫາຍຈາກ **ກ** ໄດ້.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 65 ກົດໝາຍວ່າດ້ວຍກຳມະສິດ ປີ 1990 ໂດຍໄດ້ມີການປັບປຸງໃໝ່ ໂດຍໄດ້ສັບຊ້ອນ ແລະ ຈັດລຽງບາງຄຳສັບຄືນໃໝ່ ເພື່ອໃຫ້ຜູ້ອ່ານເຂົ້າໃຈງ່າຍຂຶ້ນ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 472, 481 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ໝວດທີ 10
ທາດສະພາບ

ມາດຕາ 339 ທາດສະພາບ

ທາດສະພາບ ແມ່ນສະພາວະຄວາມເປັນຈິງທີ່ຕ້ອງຍອມຮັບ ຊຶ່ງເກີດຂຶ້ນຈາກທຳມະຊາດ ແລະ ຖືກກຳນົດໃນກົດໝາຍ ຫຼື ສັນຍາ ຫຼື ນິຕິກຳອື່ນ.

ທາດສະພາບ ຕາມທຳມະຊາດ, ຕາມກົດໝາຍ ໄດ້ກຳນົດໄວ້ໃນມາດຕາ 328 ແລະ 329 ຂອງປະ ມວນກົດໝາຍສະບັບນີ້ ແລະ ກົດໝາຍອື່ນ.

ຈຸດປະສົງ	ເພື່ອກຳນົດນິຍາມ ກ່ຽວກັບທາດສະພາບ ທີ່ເກີດຈາກທຳມະຊາດ, ກົດໝາຍ ແລະ ນິຕິກຳ.

ຕົວຢ່າງ	**1. ທາດສະພາບ ຕາມສະພາວະຄວາມເປັນຈິງທີ່ຕ້ອງຍອມຮັບຕາມທຳມະຊາດ:** **ກ, ຂ, ຄ** ແລະ **ງ** ໃຊ້ນ້ຳຮ່ອງຮ່ວມກັນ ເພື່ອນຳໃຊ້ເຂົ້າໃນການຜະລິດ ແລະ ດຳລົງຊີວິດປະຈຳວັນ, ຢູ່ມາມື້ໜຶ່ງ **ກ** ທີ່ຢູ່ຕົ້ນນ້ຳ ໄດ້ກັກນ້ຳໄວ້ ເຮັດໃຫ້ **ຂ, ຄ** ແລະ **ງ** ບໍ່ມີນ້ຳທຳການຜະລິດ ແລະ ນຳໃຊ້ເຂົ້າໃນຊີວິດປະຈຳວັນ. ຕໍ່ບັນຫານີ້ ພວກກ່ຽວໄດ້ຮັບຄວາມອັບປະໂຫຍດ ມີສິດທອງໃຫ້ **ກ** ຢຸດເຊົາການກັກນ້ຳ ຕາມມາດຕາ **336** ແລະ **338** ພ້ອມທັງທວງເອົາການໃຊ້ແທນຄ່າເສຍຫາຍທີ່ເກີດຂຶ້ນຖ້າມີ. **2. ທາດສະພາບ ຕາມກົດໝາຍ** **ກ** ມີທີ່ດິນໜຶ່ງຕອນ ແຕ່ບໍ່ມີທາງຜ່ານອອກໄປສູ່ຫົນທາງໃຫຍ່ ຊຶ່ງຖືກປິດລ້ອມດ້ວຍທີ່ດິນຂອງ **ຂ, ຄ** ແລະ **ງ** ແຕ່ເຫັນວ່າ ທີ່ດິນຂອງ **ຂ** ຈະມີຄວາມສະດວກກວ່າ ດັ່ງນັ້ນ **ກ** ຈຶ່ງໄດ້ຂໍທາງຜ່ານ ໄປຜ່ານທີ່ດິນຂອງ **ຂ** ຊຶ່ງ **ຂ** ມີພັນທະຕ້ອງໄດ້ປ່ອຍທາງໃຫ້ **ກ** ແຕ່ **ກ** ຕ້ອງໃຊ້ແທນຄ່າເສຍຫາຍທີ່ ເກີດຂຶ້ນເຊັ່ນ: ການມ້າງສິ່ງກໍ່ສ້າງ ຫຼື ກຳແພງ, ຕັດຕົ້ນໄມ້, ເວັ້ນເສຍແຕ່ຜູ້ທີ່ໃຫ້ຜ່ານນັ້ນໄດ້ຮັບຜົນປະໂຫຍດນຳ. **3. ທາດສະພາບ ຕາມສັນຍາ ແລະ ນິຕິກຳອື່ນການຂໍທາງຜ່ານ:** **ກ** ມີທີ່ດິນໜຶ່ງຕອນທີ່ຖືກປິດລ້ອມ ດ້ວຍທີ່ດິນຂອງ **ຂ** ແລະ **ຄ** ຊຶ່ງ **ກ** ບໍ່ມີທາງອອກສູ່ທາງໃຫຍ່ ສະນັ້ນ, **ກ** ຈຶ່ງໄດ້ຕົກລົງເຮັດສັນຍາທາດສະພາບກັບ **ຂ** ເພື່ອໃຫ້ຕົນສາມາດນຳໃຊ້ທີ່ດິນຂອງ **ຂ** ເປັນທາງຜ່ານອອກສູ່ທາງໃຫຍ່ໄດ້ ດ້ວຍທາງກວ້າງ 6 ແມັດ ຍາວ 100 ແມັດ ເປັນເວລາ 50 ປີ ແລະ ໄປຂຶ້ນທະບຽນທາດສະພາບນຳຫ້ອງການທີ່ດິນ. **4. ກ** ມີທີ່ດິນ ແລະ ຕ້ອງການເລັ່ງສາຍໄຟຟ້າ ແລະ ນ້ຳປະປາ ຜ່ານທີ່ດິນຂອງ **ຂ,** ດັ່ງນັ້ນ **ກ** ຈຶ່ງໄດ້ເຮັດສັນຍາທາດສະພາບກັບ **ຂ** ເພື່ອຂໍນຳໃຊ້ພື້ນທີ່ທາງອາກາດ ແລະ ທາງພື້ນດິນຂອງ **ຂ** ເປັນເວລາ 70 ປີ, ພາຍຫຼັງທີ່ໄດ້ເຮັດສັນຍາສຳເລັດແລ້ວ **ກ** ໄດ້ນຳເອົາສັນຍານັ້ນໄປຂຶ້ນທະບຽນທາດສະພາບໄວ້ກັບຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ (ຫ້ອງການທີ່ດິນ) ຫຼື ພະແນກຄຸ້ມຄອງທີ່ດິນເມືອງ ເປັນເວລາ 70 ປີ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງໃໝ່ເພື່ອກຳນົດໂຄງປະກອບ ຂອງທາດສະພາບຊຶ່ງປະກອບດ້ວຍ ທາດສະພາບຕາມທຳມະຊາດ, ຕາມທາດສະພາບກົດໝາຍ ແລະ ທາດສະພາບ ຕາມສັນຍາ ຫຼື ນິຕິກຳອື່ນ. ມາດຕາ 49 ກົດໝາຍວ່າດ້ວຍກຳມະສິດ ປີ1990 ໄດ້ກຳນົດກ່ຽວກັບທາດ ສະພາບຕາມກົດໝາຍ ເຊັ່ນ ການອະນຸຍາດໃຫ້ມີທາງຜ່ານ ແລະ ສາຍໄຟຟ້າ, ນ້ຳປະປາຜ່ານດິນ ແຕ່ແມ່ນການອະນຸຍາດໃຫ້ນຳໃຊ້ທີ່ດິນຂອງບຸກຄົນອື່ນ ເທົ່າທີ່ຈຳເປັນ ຊຶ່ງກວ້າງ, ແຄບ, ຫຼາຍໜ້ອຍສໍ່າໃດ ກົດໝາຍບໍ່ໄດ້ກຳນົດໄວ້. ການກຳນົດກ່ຽວກັບທາດສະພາບ ຕາມສັນຍາ ຫຼື ນິຕິກຳອື່ນເຂົ້າໃໝ່ນີ້ ຈະຕອບ ສະໜອງຄວາມຕ້ອງການຂອງຜູ້ຊົມໃຊ້, ສິ່ງເສີມການລົງທຶນ ໂດຍສະເພາະ ຂອງນັກລົງທຶນຕ່າງປະເທດ, ເຮັດໃຫ້ສິດທີ່ເຂົາເຈົ້າໄດ້, ມີສະຖຽນລະພາບ ແລະ ສ້າງຄວາມເຊື່ອໝັ້ນ ຂອງສັງຄົມຕໍ່ລະບົບກົດໝາຍປະເທດເຮົາຫຼາຍຂຶ້ນ.

ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 280 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ; ມາດຕາ 285 ຂອງປະມວນກົດໝາຍແພ່ງກຳປູເຈຍ; ມາດຕາ 1018 ຂອງປະມວນກົດໝາຍແພ່ງເຢຍລະມັນ; ມາດຕາ 1387 ຂອງປະມວນກົດໝາຍແພ່ງ ແລະ ພານິດ ໄທ.
ມາດຕາອ້າງອີງ	ມາດຕາ 328 ແລະ 329 ຂອງປະມວນກົດໝາຍແພ່ງ; ມາດຕາ 58-62 ຂອງກົດໝາຍວ່າດ້ວຍນ້ຳ ແລະ ຊັບພະຍາກອນແຫຼ່ງນ້ຳ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 340 ທາດສະພາບຕາມສັນຍາ ຫຼື ນິຕິກຳອື່ນ

ທາດສະພາບຕາມສັນຍາ ຫຼື ນິຕິກຳອື່ນ ແມ່ນ ການນຳໃຊ້ ຫຼື ການໃຊ້ທີ່ດິນຂອງບຸກຄົນອື່ນ ເພື່ອເພີ່ມປະໂຫຍດໃຫ້ແກ່ທີ່ດິນຂອງຕົນ ຕາມຈຸດປະສົງທີ່ໄດ້ກຳນົດໄວ້ໃນສັນຍາ ຫຼື ນິຕິກຳອື່ນ.

ທີ່ດິນ ທີ່ສະໜອງຜົນປະ�โຫຍດ ແກ່ທີ່ດິນຂອງບຸກຄົນອື່ນເອີ້ນວ່າ ທີ່ດິນທາດ ແລະ ເຈົ້າຂອງທີ່ດິນດັ່ງກ່າວ ເອີ້ນວ່າ ເຈົ້າຂອງທີ່ດິນທາດ.

ທີ່ດິນ ທີ່ໄດ້ຮັບຜົນປະໂຫຍດຈາກທີ່ດິນທາດ ເອີ້ນວ່າ ທີ່ດິນຄອງທາດ ແລະ ຜູ້ຄອບຄອງທີ່ດິນດັ່ງກ່າວ ເອີ້ນວ່າ ຜູ້ຄອບຄອງທີ່ດິນຄອງທາດ.

ຈຸດປະສົງ	ເພື່ອກຳນົດໃຫ້ ກ່ຽວກັບຄວາມໝາຍຂອງທາດສະພາບ ທີ່ເຮັດຂຶ້ນໂດຍນິຕິກຳ ເປັນຕົ້ນແມ່ນສັນຍາ.
ຕົວຢ່າງ	ໃຫ້ເບິ່ງຕົວຢ່າງທີ 3 ແລະ 4 ມາດຕາ 339 ຂອງບົດອະທິບາຍປະມວນກົດໝາຍແພ່ງ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງໃໝ່ ເພື່ອກຳນົດເນື້ອໃນໃຫ້ສອດຄ່ອງ ກັບມາດຕາ 339 ຂອງ ປະມວນກົດໝາຍແພ່ງ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 280 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ; ມາດຕາ 285 ຂອງປະມວນກົດໝາຍແພ່ງກຳປູເຈຍ; ມາດຕາ 1018 ຂອງປະມວນກົດໝາຍແພ່ງເຢຍລະມັນ; ມາດຕາ 1387 ຂອງປະມວນກົດໝາຍແພ່ງ ແລະ ພານິດ ໄທ.
ມາດຕາອ້າງອີງ	ມາດຕາ 328 ແລະ 329 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 341 ການໄດ້ທາດສະພາບຕາມສັນຍາ ຫຼື ນິຕິກຳອື່ນ

ທາດສະພາບຕາມສັນຍາ ຫຼື ນິຕິກຳອື່ນໄດ້ມາ ນັບແຕ່ເວລາທີ່ໄດ້ຈົດທະບຽນທາດສະພາບຢ່າງຖືກ ຕ້ອງຕາມກົດໝາຍເປັນຕົ້ນໄປ.

ທາດສະພາບຕາມສັນຍາ ຫຼື ນິຕິກຳອື່ນ ອາດໄດ້ມາຈາກອາຍຸຄວາມ ຕາມເງື່ອນໄຂທີ່ໄດ້ກຳນົດໄວ້ ໃນມາດຕາ 51 ຂອງປະມວນກົດໝາຍສະບັບນີ້ ຊຶ່ງໄດ້ນຳໃຊ້ຢ່າງຕໍ່ເນື່ອງ ແລະ ເປັນທີ່ຮັບຮູ້ໂດຍບຸກຄົນອື່ນ.

ການໄດ້ທາດສະພາບຕາມສັນຍາ ຫຼື ນິຕິກຳອື່ນຂອງເຈົ້າຂອງທີ່ດິນຮ່ວມໜຶ່ງ ຈະພາໃຫ້ເຈົ້າຂອງທີ່ດິນຮ່ວມອື່ນໄດ້ສິດດັ່ງກ່າວນຳ.

ການຈົດທະບຽນທາດສະພາບຕາມສັນຍາ ຫຼື ນິຕິກຳອື່ນ ໃຫ້ປະຕິບັດຕາມລະບຽບການທີ່ກ່ຽວ ຂ້ອງກັບການຈົດທະບຽນການເຄື່ອນໄຫວສິດນຳໃຊ້ທີ່ດິນ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນ ກ່ຽວກັບເງື່ອນໄຂ ແລະ ຂັ້ນຕອນໃນການສ້າງທາດສະພາບ ຕາມນິຕິກຳເຊັ່ນ: ສັນຍາ, ເງື່ອນໄຂຂອງການໄດ້ທາດສະພາບຕາມອາຍຸຄວາມ ໃນການໄດ້ສິດ, ລວມທັງກຳນົດໃຫ້ເຫັນ ກໍລະນີທີ່ຜູ້ມີສິດນຳໃຊ້ທີ່ດິນຮ່ວມ ຂອງທີ່ດິນຄອງທາດ ເມື່ອໄດ້ທາດສະພາບ ກໍຈະພາໃຫ້ຜູ້ຖືສິດນຳໃຊ້ທີ່ດິນ ຮ່ວມຜູ້ອື່ນກໍຈະໄດ້ທາດສະພາບໄປນຳ.
ຕົວຢ່າງ	**1.** ສາມາດເບິ່ງຕົວຢ່າງ 3 ແລະ ຕົວຢ່າງ 4 ມາດຕາ 339 ຂອງບົດອະທິບາຍ ປະມວນກົດໝາຍແພ່ງ. **2. ການໄດ້ທາດສະພາບຕາມອາຍຸຄວາມ** **ກ** ໄດ້ຕົກລົງເຮັດສັນຍາທາດສະພາບກັບ **ຂ** ໃນວັນທີ 1 ມັງກອນ 2000 ເພື່ອນຳໃຊ້ທີ່ດິນເປັນທາງຜ່ານເປັນເວລາ 30 ປີ ຊຶ່ງສັນຍາທາດສະພາບນັ້ນ **ກ** ບໍ່ໄດ້ນຳເອົາໄປຈົດທະບຽນນຳຫ້ອງການທີ່ດິນ, ແລ້ວ **ກ** ໄດ້ຄອບຄອງ ແລະ ນຳໃຊ້ທີ່ດິນຂອງ **ຂ** ເປັນທາງຜ່ານຕາມສັນຍາ ມາຮອດ ວັນທີ 1 ມັງກອນ 2021 **ຂ** ຈຶ່ງໄດ້ມາທວງ ໃຫ້ **ກ** ຢຸດເຊົາການນຳໃຊ້ທີ່ດິນຂອງ **ຂ** ຍ້ອນເຫດ ຜົນສັນຍາທີ່ເຊັນກັນນັ້ນບໍ່ຖືກຕ້ອງຍ້ອຍ **ກ** ຍັງບໍ່ທັນໄປຈົດທະບຽນ ແຕ່ **ກ** ມີສິດຕໍ່ວ່າ **ຂ** ເພື່ອນຳໃຊ້ ມາດຕາ 51 ດ້ວຍເຫດຜົນທີ່ວ່າ **ກ** ໄດ້ຄອບຄອງ ແລະ ນຳທີ່ດິນຂອງ **ຂ** ເປັນທາງຜ່ານ ດ້ວຍຄວາມບໍລິສຸດໃຈເປັນເວລາ 21 ປີມາແລ້ວ, ດັ່ງນັ້ນ ອີງຕາມມາດຕາ 51 ຂອງປະມວນກົດໝາຍແພ່ງ ແລ້ວ **ກ** ຈະໄດ້ສິດນຳໃຊ້ທາດສະພາບຕາມອາຍຸຄວາມນັ້ນ ແມ່ນໄດ້ເຕີມອີກ 20ປີ. **3. ກ, ຂ** ແລະ **ຄ** ຖືສິດຄອບຄອງທີ່ດິນຮ່ວມກັນ ແຕ່ເນື່ອງຈາກທາງທຽວບໍ່ສະ ດວກໃນການທຳທຸລະກິດຂອງເຂົາເຈົ້າ, ດັ່ງນັ້ນ **ກ** ຈຶ່ງໄດ້ໄປຕົກລົງເຮັດສັນຍາ ທາດສະພາບນຳ **ງ** ເພື່ອຂະຫຍາຍທາງໃຫ້ກວ້າງຕື່ມອີກ 3 ແມັດ ເປັນເວລາ 30 ປີ. ພາຍຫຼັງເຮັດສັນຍາແລ້ວ **ກ** ໄດ້ເອົາສັນຍາໄປຈົດທະບຽນ ໃນກໍລະນີນີ້ຖືວ່າ **ຂ** ແລະ **ຄ** ກໍໄດ້ສິດທາດສະພາບຄືກັນກັບ **ກ.**
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງໃໝ່ເພື່ອໃຫ້ເຫັນຫຼັກການ ແລະ ເວລາຂອງການໄດ້ທາດສະພາບ.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງຂອງປະເທດອື່ນ	ມາດຕາ 282, 283 ແລະ 284 ຂອງປະມວນກົດໝາຍແພ່ງ ຍີ່ປຸ່ນ; ມາດຕາ 287 ຂອງປະມວນກົດໝາຍແພ່ງ ກຳປູເຈຍ .
ມາດຕາອ້າງອີງ	ມາດຕາ 314 ແລະ 328 ຂອງປະມວນກົດໝາຍແພ່ງ; ມາດຕາ 104 ຂອງກົດໝາຍວ່າດ້ວຍ ທີ່ດິນ ປີ 2019.
ຂໍ້ມູນອື່ນ ຫຼື ປະເພນີສານ	ການກຳນົດມາດຕານີ້ເຂົ້າໃໝ່ ມີຜົນດີຕໍ່ການພັດທະນາທິດສະດີກົດໝາຍແພ່ງ ໂດຍສະເພາະກ່ຽວກັບທາດສະພາບ ຕາມນິຕິກຳ ຢູ່ ສປປ ລາວ ໃຫ້ມີຄວາມ ອຸດົມສົມບູນ ແລະຄົບຖ້ວນຍິ່ງຂຶ້ນ.

ມາດຕາ 342 ທາດສະພາບຕາມສັນຍາ ຫຼື ນິຕິກຳອື່ນ ແລະ ສິດນຳໃຊ້ທີ່ດິນຄອງທາດ

ທາດສະພາບຕາມສັນຍາ ຫຼື ນິຕິກຳອື່ນ ແລະ ສິດນຳໃຊ້ທີ່ດິນຄອງທາດ ບໍ່ສາມາດຕັດແຍກອອກ ຈາກກັນໄດ້, ການໂອນທີ່ດິນຄອງທາດໄປເປັນຂອງບຸກຄົນອື່ນ, ທາດສະພາບຕາມສັນຍາ ຫຼື ນິຕິກຳອື່ນ ກໍຈະຖືກໂອນໄປນຳ, ເວັ້ນເສຍແຕ່ ສັນຍາ ຫຼື ນິຕິກຳ ກ່ຽວກັບທາດສະພາບຫາກໄດ້ກຳນົດໄວ້ເປັນຢ່າງອື່ນ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນວ່າ ເມື່ອມີການໂອນສິດນຳໃຊ້ທີ່ດິນຄອງທາດ ແນ່ນອນວ່າ ທາດສະພາບກໍຈະຕິດໄປນຳ (ຄຸນລັກສະນະຜູກຕິດຂອງທາດສະພາບ).
ຕົວຢ່າງ	**ກ** ມີດິນຕອນໜຶ່ງ ໂດຍໄດ້ໃຫ້ **ຂ** ເປັນທາງຜ່ານ ຕາມສັນຍາທາດສະພາບ ຊຶ່ງມີຄວາມກວ້າງ 4 ແມັດ ຍາວ 50 ແມັດ ເປັນເວລາ 30 ປີ ເພື່ອ ຈຸດປະສົງໃນການຂົນສົ່ງສິນຄ້າຂອງໂຮງງານອອກສູ່ຕະຫຼາດ. ຕໍ່ມາ **ຂ** ໄດ້ຂາຍ ທີ່ດິນ ແລະ ກົດຈະການດັ່ງກ່າວ ໃຫ້ **ຄ** ແຕ່ ທາດສະພາບ ກໍຈະຕິດພັນກັບ ທີ່ດິນທາດໄປນຳໂດຍບໍ່ສາມາດຕັດແຍກອອກຈາກທີ່ດິນຄອງທາດໄດ້ ແລະ **ຄ** ກໍມີສິດນຳໃຊ້ທາດສະພາບ ຄືກັນກັບ **ຂ** ຕາມໄລຍະເວລາ ທີ່ **ກ** ແລະ **ຂ** ໄດ້ຕົກລົງໃນເບື້ອງຕົ້ນ, ໝາຍຄວາມວ່າ **ຄ** ຈະມີສິດຕໍ່ທາດສະພາບ. ໃນກໍລະນີ ທີ່ສັນຍາທາດສະພາບ ລະຫວ່າງ **ກ** ກັບ **ຂ** ຫາກໄດ້ກຳນົດໄວ້ວ່າ ທາດສະພາບ ຈະບໍ່ຖືກໂອນໄປນຳ ຖ້າຫາກມີການປ່ຽນເຈົ້າຂອງທີ່ດິນຄອງທາດ, ໃນກໍລະນີຫາກໄດ້ມີການຕົກລົງກັນຄືແນວນີ້ **ຄ** ກໍຈະບໍ່ໄດ້ທາດສະພາບ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງໃໝ່ເນື່ອງຈາກວ່າກົດໝາຍລາວຍັງບໍ່ໄດ້ກຳນົດກ່ຽວກັບມາດຕານີ້.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງຂອງປະເທດອື່ນ	ມາດຕາ 281 ຂອງປະມວນກົດໝາຍແພ່ງ ຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 328, 341, 343 ແລະ 344 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 343 ການນຳໃຊ້ທາດສະພາບຕາມສັນຍາ ຫຼື ນິຕິກຳອື່ນ

ເຈົ້າຂອງທີ່ດິນຄອງທາດ ສາມາດນຳໃຊ້ທາດສະພາບ ຕາມທີ່ນິຕິກຳກ່ຽວກັບທາດສະພາບໄດ້ກຳນົດໄວ້ ແຕ່ບໍ່ໃຫ້ກໍຄວາມເສຍຫາຍ ຫຼື ຂັດກັບສິດ ແລະ ຜົນປະໂຫຍດຂອງ ລັດ, ສັງຄົມ ຫຼື ຂອງບຸກຄົນອື່ນ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນ ກ່ຽວກັບເນື້ອໃນຂອງສິດໃນທາດສະພາບ.
ຕົວຢ່າງ	**ກ** ມີທີ່ດິນຕອນໜຶ່ງ ໂດຍໄດ້ໃຫ້ **ຂ** ເປັນທາງຜ່ານ ຕາມສັນຍາທາດສະພາບ ຊຶ່ງມີຄວາມກວ້າງ 4 ແມັດ ຍາວ 50 ແມັດ ເປັນເວລາ 30 ປີ ເພື່ອຈຸດປະສົງ ໃນການຂົນສົ່ງສິນຄ້າຂອງໂຮງງານອອກສູ່ຕະຫຼາດ. ດັ່ງນັ້ນ **ຂ** ເຈົ້າຂອງທາດ ສະພາບ ມີສິດນຳໃຊ້ເປັນເສັ້ນທາງທຽວຢ່າງເຕັມສ່ວນ ຕາມທີ່ໄດ້ກຳນົດໄວ້ ໃນສັນຍາທາດສະພາບ ຄືນຳໃຊ້ເປັນທາງຜ່ານ ເພື່ອຂົນສິນຄ້າອອກສູ່ຕະຫຼາດ, ແຕ່ **ຂ** ບໍ່ມີສິດເອົາສິນຄ້າຢູ່ໂຮງງານມາກອງໄວ້ຕາມທາງ ຫຼື ເອົາລົດພວງ, ລົດບັນທຸກສິນຄ້າມາຈອດຕັນທາງ ຊຶ່ງຈະເປັນການກີດຂວາງການສັນຈອນຂອງ ຜູ້ອື່ນ. ເພາະວ່າ **ກ** ຜູ້ເປັນເຈົ້າຂອງທີ່ດິນກໍມີສິດນຳໃຊ້ເສັ້ນທາງນີ້ຄືກັນກັບ **ຂ** ເຊິ່ງ ນີ້ແມ່ນຄວາມແຕກຕ່າງ ຈາກສັນຍາເຊົ່າທີ່ດິນລະຫວ່າງ **ກ** ກັບ **ຂ**.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງໃໝ່ ຍ້ອນວ່າມີຜົນດີຕໍ່ການພັດທະນາທິດສະດີກົດໝາຍແພ່ງ ໂດຍສະເພາະກ່ຽວກັບທາດສະພາບ ຕາມນິຕິກຳ ຢູ່ ສປປ ລາວ ໃຫ້ມີຄວາມ ອຸດົມສົມບູນ ແລະ ຄົບຖ້ວນຍິ່ງຂຶ້ນ ຊຶ່ງການກຳນົດການນຳໃຊ້ທາດສະພາບຈະ ຊ່ວຍໃຫ້ ເຈົ້າຂອງທາດສະພາບ ແລະ ສັງຄົມເຂົ້າໃຈ ແລະ ນຳໃຊ້ທາດສະພາບ ຢ່າງຖືກຕ້ອງຫຼາຍຂຶ້ນ.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 328, 329 ແລະ 346 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 344 ພັນທະຂອງເຈົ້າຂອງທີ່ດິນທາດ

ເຈົ້າຂອງທີ່ດິນທາດ ຕ້ອງຮັບປະກັນໃຫ້ຜູ້ຄອບຄອງທີ່ດິນຄອງທາດ ໄດ້ຮັບຜົນປະໂຫຍດຈາກທີ່ດິນທາດຢ່າງເຕັມສ່ວນ ຕາມທີ່ໄດ້ກຳນົດໄວ້ໃນສັນຍາ, ນິຕິກຳອື່ນ ຫຼື ກົດໝາຍ.

ຈຸດປະສົງ	ເພື່ອກຳນົດ ພັນທະຂອງເຈົ້າຂອງທີ່ດິນທາດໃຫ້ລະອຽດຂຶ້ນຕື່ມ.
ຕົວຢ່າງ	**ກ** ໄດ້ເອົາທີ່ດິນຂອງຕົນ ເປັນທາງຜ່ານໃຫ້ **ຂ** ເປັນເວລາ 50 ປີ. ຕະຫຼອດໄລຍະເວລາດັ່ງກ່າວ **ກ** ຕ້ອງຮັບປະກັນໃຫ້ **ຂ** ສາມາດນຳໃຊ້ທີ່ດິນຂອງຕົນເປັນທາງຜ່ານ ຢ່າງເຕັມສ່ວນ ຕາມທີ່ ໄດ້ຕົກລົງກັນໄວ້ ໂດຍບໍ່ສ້າງສິ່ງກີດຂວາງໃດຕໍ່ການນຳໃຊ້ຂອງ **ຂ**.
ເຫດຜົນໃນການສ້າງໃໝ່	ມາດຕານີ້ ສ້າງໃໝ່ຍ້ອນວ່າມີຜົນດີ ຕໍ່ການພັດທະນາທິດສະດີກົດໝາຍແພ່ງ ໂດຍສະເພາະກ່ຽວກັບທາດສະພາບ ຕາມນິຕິກຳ ຢູ່ ສປປ ລາວ ໃຫ້ມີຄວາມອຸດົມສົມບູນ ແລະ ຄົບຖ້ວນຍິ່ງຂຶ້ນ ແລະ ເພື່ອກຳນົດພັນທະຂອງເຈົ້າຂອງທີ່ດິນທາດ ແມ່ນຈຳເປັນຕ້ອງໄດ້ກຳນົດໃສ່ ເພື່ອຮັບປະກັນໃຫ້ທາດສະພາບ ໄດ້ຮັບການຊົມໃຊ້ຢ່າງເຕັມສ່ວນ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 1021 ແລະ 1022 ຂອງປະມວນກົດໝາຍແພ່ງ ເຢຍລະມັນ; ມາດຕາ 290 ຂອງປະມວນກົດໝາຍແພ່ງ ກຳປູເຈຍ.
ມາດຕາອ້າງອີງ	ມາດຕາ 328 ແລະ 329 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 345 ພັນທະຂອງຜູ້ຄອບຄອງທີ່ດິນຄອງທາດ

ຜູ້ຄອບຄອງທີ່ດິນຄອງທາດ ມີພັນທະຈ່າຍຄ່າໄດ້ຮັບຜົນປະໂຫຍດຈາກທີ່ດິນທາດ ຕາມທີ່ໄດ້ກຳນົດໄວ້ໃນສັນຍາ ຫຼື ນິຕິກຳອື່ນ ແລະ ພັນທະອື່ນຕາມກົດໝາຍ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນ ກ່ຽວກັບພັນທະ ໃນການຈ່າຍຄ່າຕອບແທນໃນການໄດ້ຮັບຜົນປະໂຫຍດ ທີ່ເຈົ້າທີ່ດິນ ຄອງທາດຕ້ອງຮັບຜິດຊອບ ແລະ ອີກກໍລະນີໜຶ່ງ
ຕົວຢ່າງ	**ກ** ໄດ້ຕົກລົງ ເຮັດສັນຍາທາດສະພາບກັບ **ຂ** ເພື່ອຈຸດປະສົງນຳໃຊ້ທີ່ດິນຂອງ **ຂ** ເປັນທາງຜ່ານເປັນເວລາ 30 ປີ ຊຶ່ງໃນສັນຍານັ້ນ **ກ** ແລະ **ຂ** ໄດ້ຕົກລົງກັນວ່າ **ກ** ຕ້ອງຈ່າຍຄ່າໄດ້ຮັບຜົນປະໂຫຍດ ຫຼື ຄ່ານຳໃຊ້ທາດສະພາບ ປີລະ 2.000.000 ກີບ ໃຫ້ **ຂ**.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງໃໝ່ ຍ້ອນວ່າມີຜົນດີຕໍ່ການພັດທະນາທິດສະດີກົດໝາຍແພ່ງ ໂດຍສະເພາະກ່ຽວກັບທາດສະພາບ ຕາມນິຕິກຳຢູ່ ສປປ ລາວ ໃຫ້ມີຄວາມອຸດົມສົມບູນ ແລະ ຄົບຖ້ວນຍິ່ງຂຶ້ນ ຊຶ່ງການກຳນົດພັນທະໃນການນຳໃຊ້ທາດສະພາບ ແມ່ນມີຄວາມຈຳເປັນ ເນື່ອງຈາກການຈ່າຍຄ່າໄດ້ຜົນປະໂຫຍດແມ່ນພັນທະ ຕົ້ນຕໍຂອງເຈົ້າຂອງທີ່ດິນຄອງທາດ ຫຼື ເຈົ້າຂອງທາດສະພາບ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 291 ຂອງປະມວນກົດໝາຍແພ່ງ ກຳປູເຈຍ.
ມາດຕາອ້າງອີງ	ມາດຕາ 328 ແລະ 329 ຂອງປະມວນກົດໝາຍແພ່ງ .
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 346 ການປົກປ້ອງທາດສະພາບຕາມສັນຍາ ຫຼື ນິຕິກຳອື່ນ

ຜູ້ຄອບຄອງທີ່ດິນຄອງທາດ ສາມາດນຳໃຊ້ມາດຕະການທີ່ໄດ້ກຳນົດໄວ້ໃນກົດໝາຍ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຕົນ ໃນຂອບເຂດທີ່ຈຳເປັນ ເພື່ອນຳໃຊ້ທາດສະພາບຕາມທີ່ໄດ້ກຳນົດໄວ້ໃນມາດຕາ 336 ແລະ 337 ຂອງປະມວນກົດໝາຍສະບັບນີ້.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນ ກ່ຽວກັບເນື້ອໃນຂອງທາດສະພາບ.
ຕົວຢ່າງ	**ກ** ນຳໃຊ້ທີ່ດິນຂອງ **ຂ** ກວ້າງ 8 ແມັດ, ຍາວ 40 ແມັດ ເປັນທາງຜ່ານ ເປັນເວລາ 50 ປີ. **ຂ** ໄດ້ປູກຕົ້ນໄມ້ໄວ້ຕາມທາງທຽວຂອງ **ກ** ຫຼາຍປີຜ່ານໄປຕົ້ນໄມ້ໄດ້ໃຫຍ່ ແລະ ງ່າໄມ້ໄດ້ມາປົກ ຫຼື ກີດຂວາງທາງຜ່ານຂອງ **ກ** ດັ່ງນັ້ນ **ກ** ສາມາດທວງໃຫ້ **ຂ** ຕັດຕົ້ນໄມ້ທີ່ປູກນັ້ນ ອອກເພື່ອບໍ່ໃຫ້ກີດຂວາງການນຳໃຊ້ເສັ້ນທາງຂອງ **ກ.**
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງໃໝ່ຍ້ອນວ່າ ມີຜົນດີຕໍ່ການພັດທະນາທິດສະດີກົດໝາຍແພ່ງ ໂດຍສະເພາະກ່ຽວກັບທາດສະພາບ ຕາມນິຕິກຳ ຢູ່ ສປປ ລາວ ໃຫ້ມີຄວາມອຸດົມສົມບູນ ແລະ ຄົບຖ້ວນຍິ່ງຂຶ້ນ ຊຶ່ງການກຳນົດ ການປົກປ້ອງທາດສະພາບ ແມ່ນມີຄວາມຈຳເປັນ ເພື່ອໃຫ້ເຈົ້າຂອງທີ່ດິນຄອງທາດ ຫຼື ເຈົ້າຂອງທາດສະພາບ ສາມາດນຳໃຊ້ສິດຂອງຕົນ ຢ່າງເຕັມສ່ວນ ຄືກັນກັບເຈົ້າກຳມະສິດ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 1027 ຂອງປະມວນກົດໝາຍແພ່ງເຢຍລະມັນ.
ມາດຕາອ້າງອີງ	ມາດຕາ 333-337 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 347 ການສິ້ນສຸດທາດສະພາບຕາມ ສັນຍາ ຫຼື ນິຕິກຳອື່ນ

ທາດສະພາບຕາມສັນຍາ ຫຼື ນິຕິກຳອື່ນ ສິ້ນສຸດລົງ ໃນກໍລະນີ ດັ່ງນີ້:

1. ຄົບກຳນົດເວລາທີ່ໄດ້ກຳນົດໄວ້ໃນ ສັນຍາ ຫຼື ນິຕິກຳ ກ່ຽວກັບທາດສະພາບ;
2. ຄົບກຳນົດເວລາຊາວປີໃນກໍລະນີບໍ່ໄດ້ກຳນົດເວລາໄວ້ໃນສັນຍາ ຫຼື ນິຕິກຳກ່ຽວກັບທາດສະພາບ;
3. ທີ່ດິນທາດ ຫຼື ທີ່ດິນຄອງທາດ ຖືກສູນຫາຍ;
4. ບໍ່ນຳໃຊ້ທາດສະພາບ ສິບປີ ຕິດຕໍ່ກັນ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນ ກ່ຽວກັບການສິ້ນສຸດທາດສະພາບ.
ຕົວຢ່າງ	**1 ການສິ້ນສຸດທາດສະພາບ ເມື່ອຄົບກຳນົດເວລາທີ່ໄດ້ກຳນົດໄວ້ໃນ ສັນຍາ** **ກ** ໄດ້ຈົດທະບຽນທາດສະພາບນຳທີ່ດິນຂອງ **ຂ** ໃນວັນທີ 1 ມັງກອນ 1980 ເພື່ອນຳໃຊ້ເປັນທາງຜ່ານ ເປັນເວລາ 50 ປີ; ຊຶ່ງ **ກ** ໄດ້ນຳໃຊ້ມາຮອດ ວັນທີ 2 ມັງກອນ 2031 ຖືວ່າຄົບ 50 ປີຕາມສັນຍາ; ດັ່ງນັ້ນ ສັນຍາທາດສະພາບ ກໍຈະສິ້ນສຸດລົງ. **2 ການສິ້ນສຸດທາດສະພາບເມື່ອຄົບກຳນົດເວລາ 20 ປີ** **ກ** ໄດ້ຕົກລົງເຮັດສັນຍາທາດສະພາບນຳ **ຂ** ແລ້ວໄດ້ນຳໄປຈົດທະບຽນໃນວັນທີ 1 ມັງກອນ 1980 ເພື່ອນຳໃຊ້ທີ່ດິນຂອງ **ຂ** ເປັນທາງຜ່ານ ແຕ່ສັນຍາ ນັ້ນບໍ່ໄດ້ກຳນົດເວລາການນຳໃຊ້ທາດສະພາບດັ່ງກ່າວໄວ້ ໃນກໍລະນີນີ້ທາດສະພາບຈະ

	ສິ້ນສຸດລົງ ໃນເມື່ອ **ກ** ໄດ້ນຳໃຊ້ທາດສະພາບມານັ້ນ ຄົບເວລາ 20 ປີ ຄື ຮອດ ວັນທີ 2 ມັງກອນ 2001; ທາດສະພາບກໍຈະສິ້ນສຸດລົງ ຕາມມາດຕາ 347 ຂໍ້ 2 **3 ການສິ້ນສຸດທາດສະພາບເມື່ອທີ່ດິນທາດ ຫຼື ທີ່ດິນຄອງທາດ ຖືກສູນຫາຍ** **ກ** ໄດ້ຈົດທະບຽນທາດສະພາບນຳທີ່ດິນຂອງ **ຂ** ໃນວັນທີ 1 ມັງກອນ 1980 ເພື່ອນຳໃຊ້ ເປັນທາງຜ່ານ ເປັນເວລາ 50 ປີ; ແຕ່ມາຮອດວັນທີ 1 ມັງກອນ 2010 ໂຮງງານຂອງ **ກ** ທີ່ເປັນເປົ້າໝາຍຂອງສັນຍາທາດສະພາບ ໄດ້ຖືກໄຟ ໄໝ້ ຊຶ່ງເປັນເຫດເຮັດໃຫ້ **ກ** ບໍ່ສາມາດຈະດຳເນີນທຸລະກິດໂຮງງານ ຂອງ **ກ** ໄດ້ຕໍ່ໄປອີກ ດັ່ງນັ້ນ ທາດສະພາບກໍຈະສິ້ນສຸດລົງຍ້ອນເປົ້າໝາຍຂອງສັນຍາບໍ່ມີ ແລ້ວ. **4 ການສິ້ນສຸດທາດສະພາບ ເມື່ອບໍ່ນຳໃຊ້ທາດສະພາບ ສິບປີຕິດຕໍ່ກັນ.** **ກ** ໄດ້ຈົດທະບຽນທາດສະພາບນຳໃຊ້ທີ່ດິນຂອງ **ຂ** ໃນວັນທີ 1 ມັງກອນ 1980 ເພື່ອນຳໃຊ້ເປັນທາງຜ່ານ ເປັນເວລາ 50 ປີ ຄືຮອດວັນທີ່ 1 ມັງກອນ 2030, ແຕ່ປີ 2000 ຫາ ປີ 2010 **ກ** ບໍ່ໄດ້ນຳໃຊ້ທີ່ດິນດັ່ງກ່າວເປັນທາງຜ່ານ ເປັນເວລາ 10 ປີ ດັ່ງນັ້ນ ທາດສະພາບກໍຈະສິ້ນສຸດລົງ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງໃໝ່ ເພື່ອການກຳນົດ ການສິ້ນສຸດທາດສະພາບ ແມ່ນມີຄວາມ ເປັນ ເພື່ອໃຫ້ເຫັນແຈ້ງໃນກໍລະນີຕ່າງໆ ທີ່ພາໃຫ້ທາດສະພາບສິ້ນສຸດລົງ ຊຶ່ງ ການກຳນົດມາດຕານີ້ເຂົ້າໃໝ່ ແມ່ນມີຜົນດີຕໍ່ການພັດທະນາທິດສະດີກົດໝາຍ ແພ່ງ ໂດຍສະເພາະກ່ຽວກັບທາດສະພາບ ຕາມນິຕິກຳ ຢູ່ ສປປ ລາວໃຫ້ມີຄວາມ ອຸດົມສົມບູນ ແລະ ຄົບຖ້ວນຍິ່ງຂຶ້ນ.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງຂອງປະເທດອື່ນ	ມາດຕາ 291 ຂອງປະມວນກົດໝາຍແພ່ງ ຍີ່ປຸ່ນ; ມາດຕາ 1397, 1398, 1399 ແລະ 1400 ຂອງປະມວນກົດໝາຍແພ່ງ ແລະ ພານິດໄທ.
ມາດຕາອ້າງອີງ	ມາດຕາ 314, 328 ແລະ 329 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 348 ການລຶບທະບຽນທາດສະພາບຕາມສັນຍາ ຫຼື ນິຕິກຳອື່ນ

ເມື່ອທາດສະພາບສິ້ນສຸດລົງ ເຈົ້າຂອງທີ່ດິນທາດ ຕ້ອງສະເໜີລຶບທະບຽນທາດສະພາບຕາມລະ ບຽບການ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ຜົນຂອງການລຶບທະບຽນທາດສະພາບຕາມສັນຍາ ຫຼື ນິຕິກຳ ອື່ນ ພາຍຫຼັງທາດສະພາບ ໄດ້ສິ້ນສຸດລົງ.
ຕົວຢ່າງ	**ກ** ໄດ້ຈົດທະບຽນທາດສະພາບນຳທີ່ດິນຂອງ **ຂ** ໃນວັນທີ 1 ມັງກອນ 2000 ເພື່ອນຳໃຊ້ເປັນທາງຜ່ານ ເປັນເວລາ 30 ປີ; ຊຶ່ງ **ກ** ໄດ້ນຳໃຊ້ມາຮອດ ວັນທີ 2 ມັງກອນ 2031 ຖືວ່າຄົບ 20 ປີ ສັນຍາສັນຍາທາດສະພາບ ກໍຈະສິ້ນສຸດລົງ ດັ່ງນັ້ນ **ຂ** ເຈົ້າຂອງທີ່ດິນທາດຕ້ອງສະເໜີໄປຫາຫ້ອງການທີ່ດິນທີ່ກ່ຽວຂ້ອງເພື່ອ ລຶບທະບຽນສັນຍາທາດສະພາບອອກ.

ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງໃໝ່ ຍ້ອນວ່າມີຜົນດີຕໍ່ການພັດທະນາທິດສະດີກົດໝາຍແພ່ງ ໂດຍສະເພາະກ່ຽວກັບທາດສະພາບ ຕາມນິຕິກຳ ຢູ່ ສປປ ລາວ ໃຫ້ມີຄວາມ ອຸດົມສົມບູນ ແລະ ຄົບຖ້ວນຍິ່ງຂຶ້ນ. ການລຶບທາດສະພາບ ແມ່ນມີຄວາມຈຳ ເປັນ ເພື່ອໃຫ້ທີ່ດິນທາດບໍ່ມີການບັນທຶກກ່ຽວກັບການເປັນທາດສະພາບ. ການ ບໍ່ລຶບທາດສະພາບອອກ ຍັງເຮັດໃຫ້ມີຄວາມສັບສົນ ວ່າທາດສະພາບ ອາດຍັງ ສືບຕໍ່ມີຜົນນຳໃຊ້ອີກຕໍ່ໄປກໍເປັນໄດ້.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 328, 329 , ແລະ 349 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 349 ຜົນຂອງການສິ້ນສຸດທາດສະພາບຕາມສັນຍາ ຫຼື ນິຕິກຳອື່ນ

ເມື່ອທາດສະພາບຕາມສັນຍາ ຫຼື ນິຕິກຳອື່ນ ຫາກສິ້ນສຸດລົງ, ເຈົ້າຂອງທີ່ດິນທາດ ມີຄວາມຮັບຜິດ ຊອບຟື້ນຟູດິນໃຫ້ຄືນສູ່ສະພາບເດີມ, ເວັ້ນເສຍແຕ່ສັນຍາ ຫຼື ນິຕິກຳອື່ນ ຫາກໄດ້ກຳນົດໄວ້ເປັນຢ່າງອື່ນ.

ຈຸດປະສົງ	ເພື່ອກຳນົດຄວາມຮັບຜິດຊອບ ໃນການຟື້ນຟູທີ່ດິນທາດ ຄືນສູ່ສະພາບເດີມ ພາຍຫຼັງທາດສະພາບໄດ້ສິ້ນສຸດລົງ.
ຕົວຢ່າງ	**1 ກ** ໄດ້ຈົດທະບຽນທາດສະພາບ ນຳໃຊ້ທີ່ດິນຂອງ **ຂ** ເພື່ອເປັນທາງຜ່ານ ເປັນ ເວລາ 30 ປີເພື່ອຈຸດປະສົງໃນການຂົນສົ່ງສິນຄ້າຂອງ�โรงงานออกสู่ตะฆาด, ເມື່ອສັນຍາທາດສະພາບສິ້ນສຸດແລ້ວ **ກ** ຜູ້ຄອບຄອງທີ່ດິນທາດ ຕ້ອງຮັບ ຜິດຊອບໃນການຟື້ນຟູທີ່ດິນທາດໃຫ້ຄືນສູ່ສະພາບເດີມ ເຊັ່ນ ຮົ້ວທາງປູຢາງ ຫຼື ສິ່ງກໍ່ສ້າງອື່ນໆ ທີ່ **ກ** ໄດ້ທຳການກໍ່ສ້າງມານັ້ນ ແລະ ສິ່ງທີ່ດິນໃຫ້ຢູ່ໃນສະພາບ ເດີມຄືນໃຫ້ **ຂ**. ອີງຕາມ ການຕີຄວາມໝາຍ ຕາມມາດຕາ 349 ທີ່ໄດ້ຂຽນວ່າ ເຈົ້າຂອງ ທີ່ ດິນທາດມີຄວາມຮັບຜິດຊອບໃນການຟື້ນຟູທີ່ດິນຄືນສູ່ສະພາບເດີມນັ້ນ ເຫັນ ວ່າບໍ່ສອດຄ່ອງ, ເພາະໃນຕົວຈິງແລ້ວຜູ້ທີ່ມີພັນທະໃນການຟື້ນຟູທີ່ດິນນັ້ນ ແມ່ນ ເຈົ້າຂອງທີ່ດິນຄອງທາດ (ຫຼືຜູ້ຄອບຄອງທີ່ດິນຄອງທາດ). ດັງນັ້ນ, ໃນອະນາຄົດ ຖ້າຫາກມີການປັບປຸງປະມວນກົດໝາຍແພ່ງ ພວກເຮົາຄວນເບິ່ງຄືນ ແລະ ປັບ ປຸງຄຳສັບ **ເຈົ້າຂອງທີ່ດິນທາດ** ມາເປັນ **ຜູ້ຄອບຄອງທີ່ດິນຄອງທາດ**
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງໃໝ່ ຍ້ອນວ່າມີຜົນດີຕໍ່ການພັດທະນາທິດສະດີກົດໝາຍແພ່ງ ໂດຍສະເພາະກ່ຽວກັບທາດສະພາບ ຕາມນິຕິກຳ ຢູ່ ສປປ ລາວ ໃຫ້ມີຄວາມ ອຸດົມສົມບູນ ແລະ ຄົບຖ້ວນຍິ່ງຂຶ້ນ. ການກຳນົດຄວາມຮັບຜິດຊອບກ່ຽວກັບ ທາດສະພາບ ມີຄວາມຈຳເປັນນການແກ້ຂໍ້ຂັດແຍ່ງທີ່ອາດຈະເກີດຂຶ້ນ ເມື່ອ ເວລາທາດສະພາບສິ້ນສຸດລົງ. ມາດຕານີ້ແມ່ນແນໃສຜູ້ທີ່ຄອບຄອງທີ່ດິນຄອງ ທາດ ມີພັນທະຟື້ນຟູທີ່ດິນສູ່ສະພາບເດີມ, ພາຍຫຼັງທາດສະພາບຕາມສັນຍາສິ້ນ ສຸດລົງ
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງຂອງປະເທດອື່ນ	ມາດຕາ 269 ຂອງປະມວນກົດໝາຍແພ່ງ ຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 328 ແລະ 329 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ໝວດທີ 11
ສິດເໜືອທີ່ດິນ

ມາດຕາ 350 ສິດເໜືອທີ່ດິນ

ສິດເໜືອທີ່ດິນ ແມ່ນ ສິດຂອງບຸກຄົນໃດໜຶ່ງ ໃນການນຳໃຊ້ທີ່ດິນຂອງບຸກຄົນອື່ນ ຕາມຂອບເຂດສິດນຳໃຊ້ຂອງດິນຕອນນັ້ນ ເພື່ອສ້າງຜົນປະໂຫຍດໃຫ້ແກ່ຕົນເອງ ດ້ວຍການກໍ່ສ້າງສິ່ງໃດໜຶ່ງ, ປູກຕົ້ນໄມ້ ແລະ ສິ່ງອື່ນ ໃສ່ທີ່ດິນຕອນດັ່ງກ່າວ ຕາມສັນຍາ ຫຼື ນິຕິກຳອື່ນ.

ຜົນປະໂຫຍດຈາກການນຳໃຊ້ທີ່ດິນ ເປັນກຳມະສິດຂອງບຸກຄົນທີ່ນຳໃຊ້ທີ່ດິນນັ້ນ ຊຶ່ງເອີ້ນວ່າ ຜູ້ມີສິດເໜືອທີ່ດິນ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນ ກ່ຽວກັບນິຍາມ ຂອງສິດເໜືອທີ່ດິນ.
ຕົວຢ່າງ	**1** ບໍລິສັດໄຟຟ້າ **ກ** ໄດ້ສຳຫຼວດຕາຂ່າຍໄຟຟ້າແຮງສູງ ແລ້ວໄດ້ມາຜ່ານທີ່ດິນນາຂອງ **ຂ** ໂດຍຈະຕ້ອງໄດ້ປັກຫຼັກໄຟຟ້າໃສ່ທີ່ດິນທີ່ເປັນທົ່ງນາຂອງ **ຂ** ຈຳນວນໜຶ່ງຫຼັກ ຊຶ່ງຈະຕ້ອງການເນື້ອທີ່ເພື່ອຕິດຕັ້ງຫຼັກໄຟຟ້າແຮງສູງແມ່ນ 10 ແມັດ x 10 ແມັດ ດັ່ງນັ້ນ ທາງບໍລິສັດ **ກ** ຈຶ່ງຈະຕ້ອງໄດ້ມາຂໍເຮັດສັນຍາສິດເໜືອທີ່ດິນກັບ **ຂ** ຜູ້ເປັນເຈົ້າຂອງດິນນາຕອນນັ້ນເປັນເວລາ 60ປີ. **2 ຂ** ໄດ້ຕົກລົງ ແລະ ໄດ້ຈົດທະບຽນ ເຮັດສິດເໜືອທີ່ດິນໃນທີ່ດິນທີ່ **ກ** ຖືສິດນຳໃຊ້ເພື່ອປຸກສ້າງ�โຮງງານ, **ຂ** ຈຶ່ງສາມາດປຸກສ້າງโຮງງານ ແລະ ດຳເນີນກິດຈະການຢູ່ທີ່ດິນຂອງ **ກ** ໄດ້, ໂດຍທີ່ໂຮງງານດັ່ງກ່າວນັ້ນແມ່ນເປັນຂອງ **ຂ**.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງໃໝ່ຍ້ອນວ່າ ມີຄວາມຈຳເປັນຂອງການຂຽນກົດໝາຍ ເພື່ອໃຫ້ເຂົ້າໃຈກ່ຽວກັບຫຼັກການ ທີ່ຈະກຳນົດໃນມາດຕາຕໍ່ໄປ, ຍ້ອນວ່າ ກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ປີ 2008 ໄດ້ກຳນົດກ່ຽວກັບການເຊົ່າຊັບສິ່ງຂອງໄວ້ໃນມາດຕາ 60-64, ແຕ່ເປັນການນຳໃຊ້ຊັບສິ່ງຂອງທົ່ວໄປ. ສ່ວນການກຳນົດກ່ຽວກັບສິດເໜືອທີ່ດິນ ແມ່ນການນຳໃຊ້ທີ່ດິນສະເພາະ, ສົ່ງເສີມການລົງທຶນຂອງຕ່າງປະເທດ, ສິດເດັດຂາດ, ຄົບຖ້ວນ ເໝືອນເຈົ້າກຳມະສິດ, ສາມາດກວດສອບໄດ້ (ສາມາດເບິ່ງການຂຶ້ນທະບຽນໄດ້), ສົ່ງເສີມການລົງທຶນ ໂດຍການມີສ່ວນຮ່ວມຂອງປະຊາຊົນ, ບໍ່ຈຳເປັນໃຫ້ລັດຕ້ອງເວນຄືນທີ່ດິນທີ່ປະຊາຊົນຄຸ້ມຄອງ. **ເພື່ອສາມາດນຳໃຊ້ຊັບສິ່ງຂອງຂອງບຸກຄົນອື່ນນັ້ນ ແມ່ນມີສາມວິທີດັ່ງນີ້:** ການເຊົ່າຊັບສິ່ງຂອງ ມີສິດເໜືອທີ່ດິນ ໄດ້ກຳມະສິດກ່ຽວກັບຊັບສິ່ງຂອງ. ການເຊົ່າຊັບສິ່ງຂອງ ແມ່ນຂໍ້ຜູກພັນທາງສັນຍາ ຊຶ່ງມີຜົນຜູກມັດລະຫວ່າງຄູ່ສັນຍາ, ສາມາດຍົກເລີກໄດ້ທຸກເວລາ, ບໍ່ມີສະຖຽນລະພາບ, ບໍ່ຈຳເປັນຂຶ້ນທະບຽນ ແລະ ບໍ່ສາມາດສືບທອດໄດ້. ການເຊົ່າຊັບສິ່ງຂອງ ກໍເປັນທາງເລືອກໜຶ່ງໃນການນຳໃຊ້ຊັບສິ່ງຂອງ ຂອງບຸກຄົນອື່ນ. ສິດເໜືອທີ່ດິນ ແມ່ນສິດໃນການນຳໃຊ້ທີ່ດິນຂອງບຸກຄົນອື່ນ ເໝືອນເຈົ້າກຳມະສິດ ຊຶ່ງເກີດຂຶ້ນບົນພື້ນຖານສັນຍາກ່ຽວກັບສິດເໜືອທີ່ດິນ ແລະ ການຂຶ້ນທະບຽນສິດເໜືອທີ່ດິນ ນຳຫ້ອງການທີ່ດິນທີ່ກ່ຽວຂ້ອງ. ສິດເໜືອທີ່ດິນ ແມ່ນສິດ ແລະ ມີຜົນສະທ້ອນຕໍ່ບຸກຄົນທີສາມ, ມີສະຖຽນລະພາບ, ບໍ່ສາມາດຍົກເລີກໄດ້ດ້ວຍເຈົ້າຂອງທີ່ດິນ, ສາມາດສືບທອດ ແລະ ໂອນໄດ້ຄືກັນ

	ກັບ ກຳມະສິດ. ສິດເໝືອທີ່ດິນ ກໍເປັນທາງເລືອກໜຶ່ງໃນການນຳໃຊ້ຊັບສິ່ງຂອງ ຂອງບຸກຄົນອື່ນ ທີ່ດີກວ່າການເຊົ່າຊັບສິ່ງຂອງ. ພ້ອມນັ້ນ, ຄ່າໃຊ້ຈ່າຍ (ຄ່າເຊົ່າ) ກໍອາດຖືກກວ່າການຊື້ຊັບສິ່ງຂອງບຸກຄົນອື່ນ. ກຳມະສິດ ແມ່ນວິທີສຸດທ້າຍ ກ່ຽວກັບການເອົາຊັບສິ່ງຂອງທີ່ເປັນຂອງ ບຸກຄົນມາເປັນຂອງຕົນ ແລະ ນຳໃຊ້, ແຕ່ທາງເລືອກນີ້ ກໍອາດຈະແພງກວ່າການ ໄດ້ສິດເໝືອທີ່ດິນ ແລະ ການເຊົ່າ ຊຶ່ງເປັນທາງເລືອກທີ່ນັກລົງທຶນສ່ວນຫາຍຫຼີກ ເວັ້ນ. ພ້ອມກັນນັ້ນ, ຄົນຕ່າງປະເທດ ແມ່ນບໍ່ໃຫ້ມີສິດນຳໃຊ້ທີ່ດິນ. ສະນັ້ນ, ກຳມະສິດ ຈຶ່ງເປັນທາງເລືອກທີ່ບໍ່ເໝາະສົມສຳລັບນັກລົງທຶນຕ່າງປະເທດ ຢູ່ ສປປ ລາວ ແລະ ບໍ່ມັກຈະນຳໃຊ້. ການນຳໃຊ້ສິດເໝືອທີ່ດິນ ແມ່ນມີຄວາມສຳຄັນຕໍ່ການພັດທະນາປະເທດ ເຮົາ ຍ້ອນວ່າ ການນຳໃຊ້ສິດດັ່ງກ່າວ ຈະເປັນການສົ່ງເສີມການລົງທຶນຂອງພາຍ ໃນ ແລະ ຕ່າງປະເທດ, ເຮັດໃຫ້ປະຊາຊົນ ມີສ່ວນຮ່ວມໃນການພັດທະນາປະ ເທດຫຼາຍຂຶ້ນ. ຫຼຸດຜ່ອນການເວນຄືນທີ່ດິນຂອງປະຊາຊົນ, ເຮັດໃຫ້ປະຊົນ ສ່ວນມີສ່ວນຮ່ວມໂດຍກົງໃນການພັດທະນາ ແລະ ໄດ້ຮັບຜົນປະໂຫຍດຈາກ ໂຄງການລົງທຶນຕ່າງໆຫຼາຍຂຶ້ນ, ນຳຄວາມຢູ່ດີກິນດີ ມາສູ່ປະຊາຊົນບັນດາເຜົ່າ.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງ ຂອງປະເທດອື່ນ	ມາດຕາ 265 ຂອງປະມວນກົດໝາຍແພ່ງຢີ່ປຸ່ນ; ມາດຕາ 1410 ຂອງປະມວນກົດໝາຍແພ່ງ ແລະ ພານິດ ໄທ.
ມາດຕາອ້າງອີງ	ມາດຕາ 434 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 351 ເປົ້າໝາຍຂອງສິດເໝືອທີ່ດິນ

ເປົ້າໝາຍຂອງສິດເໝືອທີ່ດິນ ປະກອບດ້ວຍ ພື້ນທີ່ໜ້າດິນ, ພື້ນທີ່ໃຕ້ດິນ ແລະ ພື້ນທີ່ທາງອາກາດ ຊຶ່ງສາມາດກຳນົດ ຂະໜາດ, ຂອບເຂດ ແລະ ບໍລິມາດການນຳໃຊ້.

ໃນກໍລະນີພື້ນທີ່ ທີ່ເປັນເປົ້າໝາຍຂອງສິດເໝືອທີ່ດິນ ຫາກມີບຸກຄົນອື່ນ ເຊົ່າ, ຄອບຄອງ ຢູ່ແລ້ວ ພື້ນທີ່ນັ້ນ ຈະເປັນເປົ້າໝາຍຂອງສິດເໝືອທີ່ດິນໄດ້ ກໍຕໍ່ເມື່ອບຸກຄົນດັ່ງກ່າວຫາກເຫັນດີນຳ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນ ກ່ຽວກັບຄວາມໝາຍຂອງສິດເໝືອທີ່ດິນ ວ່າສາມາດສ້າງ ສິດ ເໝືອທີ່ດິນໄດ້ສະເພາະສ່ວນໃດສ່ວນໜຶ່ງເຊັ່ນ: ໜ້າດິນ, ເທິງຟ້າເໝືອຕອນ ດິນ ຫຼື ໃຕ້ດິນກໍໄດ້.
ຕົວຢ່າງ	**1. ກ** ໄດ້ເຮັດສັນຍາສິດເໝືອທີ່ດິນກັບ **ຂ** ເພື່ອນຳໃຊ້ທີ່ດິນຂອງ **ຂ** ຈຳນວນ **2** ເຮັດຕ່າ ເພື່ອຈຸດປະສົງປຸກສ້າງ�โรงແຮມ ເປັນເວລາ **50** ປີ ແລ້ວ **ກ** ໄດ້ນຳເອົາ ສັນຍານັ້ນໄປຈົດທະບຽນຢູ່ຫ້ອງການທີ່ດິນ. **2. ກ** ໄດ້ຂະຫຍາຍຮ້ານຊັບພະສິນຄ້າໃຕ້ດິນຂອງ **ກ** ໃຫ້ກວ້າງຕື້ມອີກ ຊຶ່ງມີ ຄວາມຈຳເປັນຕ້ອງຂະຫຍາຍອອກແຕ່ພື້ນທີ່ດັ່ງກ່າວນັ້ນໄດ້ໄປກວມເອົາເຄື່ງ ໜຶ່ງຂອງພື້ນທີ່ທາງໃຕ້ດິນຂອງ **ຂ** ຊຶ່ງລວມມີເນື້ອທີ່ ແມ່ນກວ້າງ 10 ແມັດ, ຍາວ 20 ແມັດ, ດັ່ງນັ້ນ **ກ** ຈຶ່ງຕ້ອງໄດ້ໄປເຮັດສັນຍາສິດເໝືອທີ່ດິນກັບ **ຂ** ເຈົ້າຂອງພື້ນທີ່ດິນເປັນເວລາ 30 ປີ ແລ້ວ ນຳໄປຈົດທະບຽນນຳຫ້ອງການທີ່ດິນ. **3. ກ** ໄດ້ເອົາທີ່ດິນຂອງຕົນໃຫ້ **ຂ** ເຊົ່າເພື່ອເຮັດທຸລະກິດຝາມ ໝູ ມາກ່ອນແລ້ວ, ໃນກໍລະນີ**ກ**ຈະຕົກລົງເຮັດສັນຍາສິດເໝືອທີ່ດິນກັບ**ຄ**ເພື່ອເປັນອຸໂມງຢູ່ໃຕ້ດິນ ຂອງຕອນດິນດັ່ງກ່າວນັ້ນ **ກ** ຕ້ອງໄດ້ຮັບຄວາມເຫັນດີຈາກ **ຂ** ສາກ່ອນ.

ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງໃໝ່ ເພື່ອກຳນົດໃຫ້ເປົ້າໝາຍການນຳໃຊ້ທີ່ດິນ ຊຶ່ງກົດໝາຍປະເທດເຮົາ ຍັງບໍ່ທັນໄດ້ກຳນົດໄວ້. ສາມາດເບິ່ງເຫດຜົນ ໃນການປັບປຸງເພີ່ມເຕີມ ໃນມາດຕາ 350.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 265 ແລະ 269/2 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 320 ແລະ 434 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 352 ການໄດ້ສິດເໜືອທີ່ດິນ

ການໄດ້ສິດເໜືອທີ່ດິນ ແມ່ນ ນັບແຕ່ເວລາທີ່ໄດ້ຈົດທະບຽນສິດເໜືອທີ່ດິນ ຢ່າງຖືກຕ້ອງຕາມກົດໝາຍເປັນຕົ້ນໄປ.

ຜູ້ທີ່ໄດ້ນຳໃຊ້ສິດໃນຖານະເປັນເຈົ້າຂອງສິດເໜືອທີ່ດິນ ຈະໄດ້ສິດເໜືອທີ່ດິນຍ້ອນອາຍຸຄວາມ ຕາມເງື່ອນໄຂທີ່ໄດ້ກຳນົດໄວ້ໃນມາດຕາ 51 ຂອງປະມວນກົດໝາຍສະບັບນີ້.

ການຈົດທະບຽນສິດເໜືອທີ່ດິນ ໃຫ້ປະຕິບັດຕາມລະບຽບການທີ່ກ່ຽວຂ້ອງກັບການຈົດທະບຽນ ການເຄື່ອນໄຫວສິດນຳໃຊ້ທີ່ດິນ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນ ກ່ຽວກັບວິທີການໄດ້ສິດເໜືອທີ່ດິນໂດຍມີ ກົດລະນີຂອງການ ຈົດທະບຽນນິຕິກຳ ແລະ ກົດລະນີການໄດ້ສິດຕາມອາຍຸຄວາມ.
ຕົວຢ່າງ	**1. ກ** ໄດ້ຕົກລົງເຮັດສັນຍາສິດເໜືອທີ່ດິນນຳ **ຂ** (ເຈົ້າຂອງທີ່ດິນ) ທີ່ມີຄວາມ ກວ້າງ 100 ແມັດ, ຍາວ 200 ແມັດ ເພື່ອໃຫ້ **ກ** ປຸກສ້າງໂຮງງານ ເປັນເວລາ 70 ປີ. ຫຼັງຈາກນັ້ນ, **ກ** ກໍໄດ້ໄປຈົດທະບຽນສິດເໜືອທີ່ດິນ ນຳຫ້ອງການທີ່ດິນ ທີ່ກ່ຽວຂ້ອງ. ກົດລະນີນີ້ແມ່ນ **ກ** ໄດ້ສິດເໜືອທີ່ດິນ ນັບແຕ່ເວລາໄດ້ຈົດທະບຽນ ຢ່າງຖືກຕ້ອງ ເປັນຕົ້ນໄປ. **2. ກ** ໄດ້ມອບທີ່ດິນຕອນໜຶ່ງທີ່ມີເນື້ອທີ່ 10 ເຮັກຕ່າ ໃຫ້ **ຂ** ຄອບຄອງຊົ່ວຄາວ ໂດຍຈຸດປະສົງແມ່ນໃຫ້ **ຂ** ເຊົ່າເພື່ອທຳການພະລິດເທົ່ານັ້ນ, ຕໍ່ມາ **ຂ** ໄດ້ທຳການ ປອມແປງເອກະສານຄື ເຮັດເປັນໃບມອບສິດໃນທີ່ດິນຕອນດັ່ງກ່າວທັງໝົດນັ້ນ ໃຫ້ **ຂ** ເປັນຜູ້ມີສິດແລ້ວ **ຂ** ກໍໄດ້ເອົາທີ່ດິນຕອນນັ້ນ ໄປເຮັດສັນຍາສິດເໜືອ ທີ່ດິນກັບ **ຄ** ເພື່ອຈຸດປະສົງປຸກຢາງພາລາ ເປັນເວລາ 40 ປີ ພາຍຫຼັງທີ່ໄດ້ ເຮັດສັນຍາສຳ ເລັດແລ້ວ **ຄ** ກໍໄດ້ນຳເອົາສັນຍານັ້ນໄປຈົດທະບຽນ ໃນວັນທີ່ 1 ມັງກອນ ປີ 2,000, ແລ້ວ **ຄ** ກໍໄດ້ຄອບຄອງທີ່ດິນຕອນດັ່ງກ່າວດ້ວຍຄວາມ ບໍລິສຸດໃຈຕາມຈຸດປະສົງມາໂດຍຕະຫຼອດ ຈົນມາເຖິງ ວັນທີ່ 3 ມີນາ ປີ 2021 **ກ** ຜູ້ເປັນເຈົ້າຂອງ ຈຶ່ງມາຫວງ, ຮ້ອງຟ້ອງໃຫ້ **ຄ** ອອກຈາກທີ່ດິນ ວ່າທີ່ດິນຕອນດັ່ງກ່າວແມ່ນ **ກ** ເປັນຜູ້ຖືສິດ ຫຼື ເປັນເຈົ້າຂອງບໍ່ແມ່ນ **ຂ,** ແຕ່ **ຄ** ມີສິດຮ້ອງຂໍຕໍ່ວ່າເພື່ອນຳໃຊ້ ມາດຕາ 51 ດ້ວຍເຫດຜົນທີ່ວ່າ ຕະຫຼອດໄລຍະ ຂອງການຄອບຄອງ ແລະ ນຳໃຊ້ທີ່ດິນຂອງ **ກ** ເພື່ອທຳການປຸກຢາງພາລານັ້ນ **ຄ** ໄດ້ຄອບຄອງດ້ວຍຄວາມບໍລິສຸດໃຈເປັນເວລາ 21 ປີມາແລ້ວ, ສະນັ້ນ **ຄ** ຈະໄດ້ສິດນຳໃຊ້ ສິດເໜືອທີ່ດິນຕາມອາຍຸຄວາມນັ້ນ ແມ່ນໄດ້ເຕີມອີກ 20 ປີ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ ສ້າງໃໝ່ເພື່ອໃຫ້ເຫັນເຖິງເງື່ອນໄຂ ຫຼື ສາເຫດ ຂອງການໄດ້ສິດເໜືອ ທີ່ດິນ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 163 ແລະ 265 ປະມວນກົດໝາຍແພ່ງ ຍີ່ປຸ່ນ

ມາດຕາອ້າງອີງ	ມາດຕາ 51, 292, 320 ແລະ 434 ຂອງປະມວນກົດໝາຍແພ່ງ; ມາດຕາ 104 ຂອງກົດໝາຍວ່າດ້ວຍທີ່ດິນ ປີ 2019.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 353 ການນຳໃຊ້ສິດເໜືອທີ່ດິນ

ຜູ້ນຳໃຊ້ສິດເໜືອທີ່ດິນ ສາມາດນຳໃຊ້ສິດຂອງຕົນ ຕາມທີ່ໄດ້ກຳນົດໄວ້ໃນ ສັນຍາ ຫຼື ນິຕິກຳອື່ນ ແຕ່ບໍ່ໃຫ້ກໍຄວາມເສຍຫາຍ ຫຼື ຂັດກັບສິດ ແລະ ຜົນປະໂຫຍດຂອງລັດ, ຂອງສັງຄົມ ຫຼື ຂອງບຸກຄົນອື່ນ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນ ກ່ຽວກັບເນື້ອໃນຂອງສິດ ເໜືອທີ່ດິນ.
ຕົວຢ່າງ	**ກ** ນຳໃຊ້ສິດເໜືອດິນຂອງຕົນ ໃນການປຸກສ້າງໂຮງງານຜະລິດສາຍໄຟຟ້າ ຊຶ່ງຜູ້ກ່ຽວມີສິດໃນການຜະລິດ ແລະ ນຳໃຊ້ສິດຂອງຕົນຢ່າງເຕັມສ່ວນແຕ່ການນຳໃຊ້ສິດຂອງ **ກ** ນັ້ນບໍ່ໃຫ້ສ້າງຄວາມເສຍຫາຍໃຫ້ແກ່ຜູ້ອື່ນ ເຊັ່ນ: ການປ່ອຍນ້ຳເສຍ, ການປ່ອຍມົນລະພິດອອກສູ່ອາກາດ, ການບໍ່ໃຫ້ມີກິ່ນເໝັນ ແລະ ອື່ນໆ ທີ່ຈະເປັນການຂັດຕໍ່ສິດ ແລະ ຜົນປະໂຫຍດຂອງຜູ້ອື່ນ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງໃໝ່ ເພື່ອກຳນົດການນຳໃຊ້ສິດຂອງບຸກຄົນ ຕ້ອງມີຂອບເຂດ ເພື່ອບໍ່ໃຫ້ກໍຄວາມເສຍຫາຍ ແລະ ຂັດກັບຜົນປະ�โຫຍດຂອງບຸກຄົນອື່ນ ເຊັ່ນ ດຽວກັນກັບການນຳໃຊ້ກຳມະສິດ. ສະນັ້ນ, ການກຳນົດຂອບເຂດການນຳໃຊ້ສິດເໜືອທີ່ດິນ ແມ່ນມີຄວາມຈຳເປັນ ເພື່ອໃຫ້ເຫັນຂອບເຂດໃນການນຳໃຊ້ສິດເໜືອທີ່ດິນ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 265 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 320 ແລະ 434 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 354 ພັນທະຂອງຜູ້ໃຫ້ສິດເໜືອທີ່ດິນ

ຜູ້ໃຫ້ສິດເໜືອທີ່ດິນ ຕ້ອງຮັບປະກັນໃຫ້ຜູ້ນຳໃຊ້ສິດເໜືອທີ່ດິນ ນຳໃຊ້ທີ່ດິນຂອງຕົນຢ່າງເຕັມສ່ວນຕາມທີ່ໄດ້ກຳນົດໄວ້ໃນ ສັນຍາ ຫຼື ນິຕິກຳອື່ນ.

ຈຸດປະສົງ	ເພື່ອກຳນົດພັນທະຂອງຜູ້ໃຫ້ສິດເໜືອທີ່ດິນ.
ຕົວຢ່າງ	**ກ** ໄດ້ເອົາທີ່ດິນຂອງຕົນໃຫ້ **ຂ** ປຸກສ້າງໂຮງງານ ຕາມສັນຍາສິດເໜືອທີ່ດິນ ເປັນເວລາ 30 ປີ, ດັ່ງນັ້ນ **ກ** ມີພັນທະໃນການ ບໍ່ສ້າງສິ່ງກີດຂວາງ ແລະ ຕ້ອງອຳນວຍຄວາມສະດວກໃຫ້ **ຂ** ເພື່ອໃຫ້ **ຂ** ໄດ້ປຸກສ້າງໂຮງງານ ແລະ ນຳໃຊ້ທີ່ດິນຂອງຕົນຕາມສັນຍາ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງໃໝ່ ເພື່ອກຳນົດພັນທະ ຂອງຜູ້ໃຫ້ສິດເໜືອທີ່ດິນ ແມ່ນຈຳເປັນ ເພື່ອຮັບປະກັນໃຫ້ສິດເໜືອທີ່ດິນ ໄດ້ຮັບການຊົມໃຊ້ຢ່າງເຕັມສ່ວນ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 320, 434 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 355 ພັນທະຂອງຜູ້ນຳໃຊ້ສິດເໜືອທີ່ດິນ

ຜູ້ນຳໃຊ້ສິດເໜືອທີ່ດິນ ມີພັນທະຈ່ຍຄ່ານຳໃຊ້ທີ່ດິນ ຕາມທີ່ໄດ້ກຳນົດໄວ້ໃນສັນຍາ ຫຼື ນິຕິກຳອື່ນ ແລະ ພັນທະອື່ນຕາມກົດໝາຍ.

ຈຸດປະສົງ	ເພື່ອກຳນົດພັນທະ ຂອງຜູ້ນຳໃຊ້ສິດເໜືອທີ່ດິນ.
ຕົວຢ່າງ	**ກ** ໄດ້ຄອບຄອງທີ່ດິນຂອງ **ຂ** ຈຳນວນ 2 ເຮັດຕ່າ ຕາມສັນຍາສິດເໜືອທີ່ດິນ ເປັນເວລາ 30ປີ ເພື່ອຈຸດປະສົງເຮັດໂຮງງານຕັດຫຍີບ ຊຶ່ງໃນສັນຍານັ້ນ **ກ** ແລະ **ຂ** ໄດ້ຕົກລົງກັນວ່າ ໃຫ້ **ກ** ຕ້ອງຈ່ຍຄ່ານຳໃຊ້ທີ່ດິນໃຫ້ **ຂ** ເປັນປີລະ 20.000.000ກີບ. ດັ່ງນັ້ນ ໃນແຕ່ລະປີ **ກ** ຕ້ອງໄດ້ຈ່ຍຄ່ານຳໃຊ້ທີ່ດິນໃຫ້ **ຂ** ຕາມສັນຍາສິດເໜືອທີ່ດິນ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງໃໝ່ ເພື່ອກຳນົດພັນທະ ຂອງຜູ້ນຳໃຊ້ສິດເໜືອທີ່ດິນ ແມ່ນມີຄວາມຈຳເປັນ ເນື່ອງຈາກການຈ່ຍຄ່ານຳໃຊ້ສິດເໜືອທີ່ດິນ ແມ່ນພັນທະຕົ້ນຕໍ ຂອງເຈົ້າຂອງ ສິດນຳໃຊ້ສິດເໜືອທີ່ດິນ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 266, 274 ແລະ 276 ຂອງປະມວນກົດໝາຍແພ່ງ ຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 320 ແລະ 434 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 356 ການປົກປ້ອງສິດເໜືອທີ່ດິນ

ຜູ້ນຳໃຊ້ສິດເໜືອທີ່ດິນ ສາມາດນຳໃຊ້ມາດຕະການທີ່ໄດ້ກຳນົດໄວ້ໃນກົດໝາຍ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຕົນ ຄືກັນກັບເຈົ້າກຳມະສິດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 336 ຫາ 338 ຂອງປະມວນກົດໝາຍສະບັບນີ້.

ຈຸດປະສົງ	ເພື່ອກຳນົດກ່ຽວກັບການປົກປ້ອງສິດເໜືອທີ່ດິນ
ຕົວຢ່າງ	**ກ** ໄດ້ນຳໃຊ້ສິດເໜືອທີ່ດິນຂອງຕົນເພື່ອເຮັດໂຮງງານຕາມສັນຍາ, ຕໍ່ມາ **ຂ** ທີ່ອາໃສຢູ່ຂ້າງດິນຂອງ **ກ** ໄດ້ທຳການກໍ່ສ້າງ ແລ້ວໄດ້ນຳເອົາຫີນ ແລະ ຊາຍມາກອງໃສ່ທາງເຂົ້າ-ອອກໂຮງງານຂອງ **ກ** ຊຶ່ງໄດ້ສ້າງຄວາມເສຍຫາຍໃຫ້ **ກ.** ດັ່ງນັ້ນ **ກ** ຈຶ່ງໄດ້ທັກທ້ວງໃຫ້ **ຂ** ຕ້ອງມາໂຍກຍ້າຍສິ່ງຂີດຂວາງອອກຈາກທາງເຂົ້າໂຮງງານຂອງ **ກ** ຕາມມາດຕາ 336 ແລະ 337 ຂອງປະມວນກົດໝາຍແພ່ງ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງໃໝ່ ເພື່ອກຳນົດການປົກປ້ອງສິດເໜືອທີ່ດິນ ແມ່ນມີຄວາມຈຳເປັນ ເພື່ອໃຫ້ເຈົ້າຂອງສິດເໜືອທີ່ດິນ ສາມາດນຳໃຊ້ສິດຂອງຕົນ ຢ່າງເຕັມສ່ວນ ຄືກັນກັບເຈົ້າກຳມະສິດ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 336 -338 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 357 ການໂອນສິດເໜືອທີ່ດິນ

ຜູ້ນຳໃຊ້ສິດເໜືອທີ່ດິນ ສາມາດໂອນສິດເໜືອທີ່ດິນຂອງຕົນ ໃຫ້ບຸກຄົນອື່ນ.

ຈຸດປະສົງ	ເພື່ອກຳນົດກ່ຽວກັບການໂອນສິດເໜືອທີ່ດິນ.
ຕົວຢ່າງ	**ກ** ໄດ້ສິດເໜືອທີ່ດິນຈາກ **ຂ** ເປັນເວລາ 30 ປີ ຕາມສັນຍາ ໃນເນື້ອທີ່ດິນ ຈຳນວນ 2 ເຮັກຕ່າ ເພື່ອຈຸດປະສົງສ້າງໂຮງງານຕັດຫຍິບ ແຕ່ເນື່ອງຈາກວ່າ **ກ** ຂາດທຶນໝຸນວຽນ **ກ** ສາມາດໂອນສິດເໜືອທີ່ດິນ ຫຼື ກົດຈະການໂຮງງານຕັດຫຍິບ ດັ່ງກ່າວໄປໃຫ້ **ຄ** ເປັນຜູ້ດຳເນີນ ແລະ ຄອບຄອງຕໍ່.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງໃໝ່ ເພື່ອກຳນົດສິດໃນການໂອນສິດເໜືອທີ່ດິນ ກໍແມ່ນສິດໜຶ່ງ ຂອງເຈົ້າຂອງສິດເໜືອທີ່ດິນ ເໝືອນເຈົ້າກຳມະສິດ. ສະນັ້ນ, ການກຳນົດມາດຕານີ້ ເຂົ້າໃສ່ ແມ່ນມີຄວາມຈຳເປັນ ເພື່ອໃຫ້ເຈົ້າຂອງສິດເໜືອທີ່ດິນ ສາມາດນຳໃຊ້ ສິດຂອງຕົນ ຢ່າງເຕັມສ່ວນ ຄືກັນກັບເຈົ້າກຳມະສິດ.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງ ຂອງປະເທດອື່ນ	ມາດຕາ 1411 ຂອງປະມວນກົດໝາຍແພ່ງ ແລະ ພານິດ ໄທ.
ມາດຕາອ້າງອີງ	ມາດຕາ 292 ແລະ 401 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 358 ການສືບທອດສິດເໜືອທີ່ດິນ

ສິດເໜືອທີ່ດິນ ສາມາດສືບທອດໄດ້, ເວັ້ນເສຍແຕ່ ສັນຍາ ຫຼື ນິຕິກຳອື່ນ ຫາກໄດ້ກຳນົດໄວ້ເປັນ ຢ່າງອື່ນ.

ຈຸດປະສົງ	ເພື່ອກຳນົດ ກ່ຽວກັບການສືບທອດສິດເໜືອທີ່ດິນ.
ຕົວຢ່າງ	**ກ** ໄດ້ເຮັດສັນຍານຳໃຊ້ສິດເໜືອທີ່ດິນນຳ **ຂ** ຈຳນວນ 2 ເຮັກຕາ ເປັນເວລາ 30ປີ ເພື່ອຈຸດປະສົງປຸກສ້າງໂຮງງານຜະລິດສັງກະສີ, ເຊິ່ງ **ກ** ໄດ້ຂຶ້ນທະບຽນ, ຕໍ່ມາ **ກ** ໄດ້ເສຍຊີວິດ, ເຊິ່ງ **ກ** ມີລູກ 2ຄົນ ຄື **ຄ** ແລະ **ງ,** ສະນັ້ນ ສິດເໜືອທີ່ດິນຂອງ **ກ** ກໍຈະຕົກທອດໄປເປັນກຳມະສິດຮ່ວມຂອງ **ຄ** ແລະ **ງ.** ເວັ້ນເສຍແຕ່ ກໍລະນີ **ກ** ຫາກໄດ້ຂຽນພິໄນກຳ ມອບສິດ ເໜືອທີ່ດິນໃຫ້ **ຄ** ຫຼື **ງ**, ກໍລະນີນີ້ ຈະຖືເອົາຕາມພິໄນກຳ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງໃໝ່ ເພື່ອກຳນົດການສືບທອດສິດເໜືອທີ່ດິນ ກໍແມ່ນສິດໜຶ່ງ ຂອງເຈົ້າຂອງສິດເໜືອທີ່ດິນ ເໝືອນເຈົ້າກຳມະສິດ. ສະນັ້ນການກຳນົດມາດຕານີ້ ເຂົ້າໃສ່ ແມ່ນມີຄວາມຈຳເປັນ ເພື່ອໃຫ້ເຈົ້າຂອງສິດເໜືອທີ່ດິນ ສາມາດນຳໃຊ້ ສິດຂອງຕົນ ຢ່າງເຕັມສ່ວນ ຄືກັນກັບເຈົ້າກຳມະສິດ.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງ ຂອງປະເທດອື່ນ	ມາດຕາ 1411 ຂອງປະມວນກົດໝາຍແພ່ງ ແລະ ພານິດ ໄທ.
ມາດຕາອ້າງອີງ	ມາດຕາ 566 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 359 ການສິ້ນສຸດສິດເໜືອທີ່ດິນ

ສິດເໜືອທີ່ດິນ ຈະສິ້ນສຸດລົງ ໃນກໍລະນີ ດັ່ງນີ້:

1. ຄົບກຳນົດເວລາ ທີ່ໄດ້ກຳນົດໄວ້ໃນ ສັນຍາ ຫຼື ນິຕິກຳອື່ນ ກ່ຽວກັບສິດເໜືອທີ່ດິນ;

2. ຜູ້ນຳໃຊ້ສິດເໜືອທີ່ດິນ ໄດ້ສະລະສິດຂອງຕົນ, ຖ້າສັນຍາ ຫຼື ນິຕິກຳອື່ນ ຫາກບໍ່ໄດ້ກຳນົດເວ ລາໄວ້ໂດຍໄດ້ແຈ້ງໃຫ້ຜູ້ໃຫ້ສິດເໜືອທີ່ດິນຊາບລ່ວງໜ້າ ໜຶ່ງປີ ຫຼື ຈ່ຍຄ່ານຳໃຊ້ສິດເໜືອທີ່ດິນອີກໜຶ່ງປີ;

3. ພາຍໃນເວລາ ຊາວ ຫາ ສາມສິບ ປີ ໂດຍອີງຕາມປະເພດ ແລະ ສະພາບການຂອງເປົ້າໝາຍ ຂອງການນຳໃຊ້ ແລະ ເງື່ອນໄຂໃນເວລາຕົກລົງກັນ ກ່ຽວກັບສິດເໜືອທີ່ດິນ ຖ້າສັນຍາ ຫຼື ນິຕິກຳອື່ນ ຫາກບໍ່ໄດ້ກຳນົດເວລາໄວ້.

ຈຸດປະສົງ	ເພື່ອກຳນົດການກ່ຽວກັບການສິ້ນສຸດສິດເໜືອທີ່ດິນ.
ຕົວຢ່າງ	1. **ກ** ໄດ້ສິດເໜືອທີ່ດິນຈາກ **ຂ** ໃນວັນທີ 1 ມັງກອນ 2000 (ມື້ຂຶ້ນທະບຽນ) ເພື່ອນຳໃຊ້ເຮັດໂຮງງານຜະລິດເສັ້ນເຝີ ເປັນເວລາ 20 ປີ ໃນກໍລະນີນີ້ ສັນຍາກໍຈະສິ້ນສຸດພາຍຫຼັງວັນທີ 1 ມັງກອນ 2020 ໄດ້ຜ່ານໄປ. (ອີງຕາມ ມາດຕາ 47 ຂໍ້ 2 ແລະ ມາດຕາ 48 ຂໍ້ 2) 2. **ກ** ໄດ້ສິດເໜືອທີ່ດິນຈາກ **ຂ** ໃນວັນທີ 1 ມັງກອນ 2000 (ມື້ຂຶ້ນທະບຽນ) ເພື່ອນຳໃຊ້ເຮັດໂຮງງານຜະລິດເສັ້ນເຝີ ໂດຍບໍ່ກຳນົດເວລາຂອງສິດເໜືອທີ່ດິນ. ມາຮອດ ວັນທີ 1 ມັງກອນ 2015 **ກ** ໄດ້ໄປແຈ້ງໃຫ້ **ຂ** ຊາບວ່າ ໃນວັນທີ່ 1 ມັງກອນ 2016 **ກ** ຈະຂໍຢຸດເຊົາກິດຈະກາການດັ່ງກ່າວ ຍ້ອນເຫດ ຜົນວ່າ **ກ** ໄດ້ຂາດເຂີນທຶນໝຸນວຽນ. ໝາຍຄວາມວ່າສັນຍາສິດ ເໜືອທີ່ດິນຈະໄປສິ້ນໃນວັນທີ 1 ມັງກອນ 2016. 3. **ກ** ໄດ້ສິດເໜືອທີ່ດິນຈາກ **ຂ** ໃນວັນທີ 1 ມັງກອນ 2000 (ມື້ຂຶ້ນທະບຽນ) ເພື່ອນຳໃຊ້ເຮັດໂຮງງານຜະລິດເສັ້ນເຝີ ໂດຍບໍ່ໄດ້ກຳນົດເວລາຂອງສິດເໜືອ ທີ່ດິນ **ກ** ໄດ້ດຳເນີນກິດຈະການໂຮງງານມາຮອດວັນທີ 1 ມັງກອນ 2015 **ກ** ໄດ້ໄປສະລະສິດເໜືອທີ່ດິນນຳ **ຂ** ເພື່ອຢຸດເຊົາກິດຈະການດັ່ງກ່າວ ແຕ່ **ກ** ຕ້ອງຈ່າຍຄ່ານຳໃຊ້ສິດເໜືອທີ່ດິນໃຫ້ **ຂ** ຮອດ ວັນທີ 1 ມັງກອນ 2016.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງໃໝ່ ເພື່ອກຳນົດ ການສິ້ນສຸດສິດເໜືອທີ່ດິນ ແມ່ນມີຄວາມເປັນ ເພື່ອໃຫ້ເຫັນກໍລະນີຕ່າງໆທີ່ພາໃຫ້ສິດເໜືອທີ່ດິນ ສິ້ນສຸດລົງ.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງຂອງປະເທດອື່ນ	ມາດຕາ 268 ຂອງປະມວນກົດໝາຍແພ່ງ ຍີ່ປຸ່ນ; ມາດຕາ 1413 ຂອງປະມວນກົດໝາຍແພ່ງ ແລະ ພານິດໄທ.
ມາດຕາອ້າງອີງ	ມາດຕາ 360 ແລະ 361 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 360 ການລຶບທະບຽນສິດເໜືອທີ່ດິນ

ເມື່ອສິດເໜືອທີ່ດິນສິ້ນສຸດລົງ, ຜູ້ນຳໃຊ້ສິດເໜືອທີ່ດິນ ຕ້ອງສະເໜີລຶບທະບຽນສິດເໜືອທີ່ດິນ ຕາມລະບຽບການ.

ຈຸດປະສົງ	ເພື່ອກຳນົດການລຶບທະບຽນສິດເໜືອທີ່ດິນ ພາຍຫຼັງສິດເໜືອທີ່ດິນ ໄດ້ສິ້ນສຸດ ລົງ.
ຕົວຢ່າງ	ພາຍຫຼັງທີ່ ສັນຍາສິດເໜືອທີ່ດິນ ລະຫວ່າງ **ກ** ຜູ້ໄດ້ສິດ ແລະ **ຂ** ຜູ້ເປັນເຈົ້າ ຂອງທີ່ດິນໄດ້ສິ້ນສຸດລົງ ຕາມກຳເວລາທີ່ໄດ້ກຳນົດໄວ້ໃນສັນຍາ ສິດເໜືອທີ່ດິນ ແລ້ວ **ກ** ຜູ້ນຳໃຊ້ສິດເໜືອທີ່ດິນ ຕ້ອງໄປລຶບທະບຽນສິດເໜືອທີ່ດິນ ຢູ່ຫ້ອງ ການທີ່ດິນທີ່ກ່ຽວຂ້ອງ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງໃໝ່ ເພື່ອກຳນົດການລຶບສິດເໜືອທີ່ດິນ ແມ່ນມີຄວາມຈຳເປັນ ເພື່ອໃຫ້ທີ່ດິນທີ່ຖືກນຳໃຊ້ ບໍ່ມີການບັນທຶກກ່ຽວກັບສິດເໜືອທີ່ດິນ. ການບໍ່ລຶບ ສິດເໜືອທີ່ດິນອອກ ຍັງເຮັດໃຫ້ມີວາມສັບສົນວ່າ ສິດເໜືອທີ່ດິນ ອາດຍັງສືບຕໍ່ ມີຜົນນຳໃຊ້ອີກຕໍ່ໄປ ກໍເປັນໄດ້.

ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 352, 359 ແລະ 361 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 361 ຜົນຂອງການສິ້ນສຸດສິດເໜືອທີ່ດິນ

ເມື່ອສິດເໜືອທີ່ດິນຫາກສິ້ນສຸດລົງ ຜູ້ນຳໃຊ້ສິດເໜືອທີ່ດິນ ມີຄວາມຮັບຜິດຊອບຟື້ນຟູທີ່ດິນໃຫ້ຄືນສູ່ສະພາບເດີມ, ເວັ້ນເສຍແຕ່ ສັນຍາ ຫຼື ນິຕິກຳອື່ນ ຫາກໄດ້ກຳນົດໄວ້ເປັນຢ່າງອື່ນ.

ຈຸດປະສົງ	ເພື່ອກຳນົດຄວາມຮັບຜິດຊອບ ໃນການຟື້ນຟູສິດເໜືອທີ່ດິນ ພາຍຫຼັງສິດເໜືອທີ່ດິນ ໄດ້ສິ້ນສຸດລົງ.
ຕົວຢ່າງ	ພາຍຫຼັງທີ່ ສັນຍາສິດເໜືອທີ່ດິນລະຫວ່າງ **ກ** ຜູ້ໄດ້ສິດ ແລະ **ຂ** ຜູ້ເປັນເຈົ້າຂອງທີ່ດິນໄດ້ສິ້ນສຸດລົງ ຕາມກຳນົດເວລາໃນສັນຍາສິດເໜືອທີ່ດິນ ແລ້ວ **ກ** ຜູ້ນຳໃຊ້ສິດເໜືອທີ່ດິນຕ້ອງໄປລຶບທະບຽນສິດເໜືອທີ່ດິນຢູ່ຫ້ອງການທີ່ດິນທີ່ກ່ຽວຂ້ອງ, ນອກນັ້ນ **ກ** ຍັງມີພັນທະຕ້ອງໄດ້ຟື້ນຟູທີ່ດິນໃຫ້ຄືນສູ່ສະພາບເດີມ ເຊັ່ນ ຕັດໄມ້, ທັບມ້າງສິ່ງກໍ່ສ້າງ ແລະ ອື່ນໆ ອອກຈາກທີ່ດິນຕອນດັ່ງກ່າວ ແລ້ວຈຶ່ງສົ່ງທີ່ດິນຕອນນັ້ນຄືນໃຫ້ **ຂ** ຜູ້ເປັນເຈົ້າຂອງ, ເວັ້ນເສຍແຕ່ກໍລະນີທີ່ **ກ** ແລະ **ຂ** ຫາກໄດ້ຕົກລົງກັນເປັນຢ່າງອື່ນເທົ່ານັ້ນ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງໃໝ່ ເພື່ອກຳນົດຄວາມຮັບຜິດຊອບກ່ຽວກັບສິດເໜືອທີ່ດິນ ມີຄວາມຈຳເປັນການແກ້ໄຂຂໍ້ຂັດແຍ່ງທີ່ອາດຈະເກີດຂຶ້ນ ເມື່ອເວລາສິດເໜືອທີ່ດິນສິ້ນສຸດລົງ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 269 ຂອງປະມວນກົດໝາຍແພ່ງ ຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 359 ແລະ 360 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ບົດອະທິບາຍປະມວນກົດໝາຍແພ່ງ

ພາກທີ V ຂໍ້ຜູກພັນໃນສັນຍາ
(ມາດຕາ 362-469)

ພາກທີ V
ຂໍ້ຜູກພັນໃນສັນຍາ

ໝວດທີ 1
ຫຼັກການທົ່ວໄປ

ມາດຕາ 362 ຂໍ້ຜູກພັນໃນສັນຍາ

ຂໍ້ຜູກພັນໃນສັນຍາ ແມ່ນສາຍພົວພັນທາງດ້ານກົດໝາຍ ທີ່ເກີດຂຶ້ນຈາກສັນຍາ ຊຶ່ງພາໃຫ້ຄູ່ສັນຍາມີສິດ ແລະ ພັນທະທາງແພ່ງ ທີ່ຕ້ອງປະຕິບັດຕໍ່ກັນ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ກ່ຽວກັບນິຍາມຂອງຂໍ້ຜູກພັນໃນສັນຍາ, ຊີ້ໃຫ້ເຫັນໄດ້ວ່າສິດ ແລະ ພັນທະທາງແພ່ງ ທີ່ຄູ່ສັນຍາຕ້ອງປະຕິບັດຕໍ່ກັນນັ້ນ ແມ່ນເກີດມາຈາກສັນຍາ.
ຕົວຢ່າງ	**ກ** ຕ້ອງການຊື້ໂທລະສັບ 1 ໜ່ວຍໃນລາຄາ 500.000 ກີບນຳ **ຂ. ກ** ມີພັນທະຈ່າຍເງິນຄືບຖ້ວນໃຫ້ **ຂ** ແລະ **ກ** ມີສິດທວງເອົາໂທລະສັບນຳ **ຂ,** ສ່ວນ **ຂ** ມີສິດທວງເອົາເງິນຄ່າໂທລະສັບ ແລະ ມີພັນທະມອບໂທລະສັບໃຫ້ **ກ**.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 2 ວັກ 1 ຂໍ້ຜູກພັນໃນສັນຍາ ແລະ ຂໍ້ຜູກພັນນອກສັນຍາ ຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ປີ 2008. ໝາຍຄວາມວ່າເອົາແຕ່ເນື້ອໃນວັກ 1 ມາດຕາ 2 ຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ປີ 2008.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 274 ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2015.
ມາດຕາອ້າງອີງ	ມາດຕາ 365 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 363 ຫຼັກການກ່ຽວກັບຂໍ້ຜູກພັນໃນສັນຍາ

ຫຼັກການກ່ຽວກັບຂໍ້ຜູກພັນໃນສັນຍາ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນມາດຕາ 8 ຂອງປະມວນກົດໝາຍສະບັບນີ້.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ວ່າສັນຍາແມ່ນເກີດຂຶ້ນຈາກການຕົກລົງກັນຂອງຄູ່ສັນຍາ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 364, ແຕ່ການຕົກລົງນັ້ນ ກໍຕ້ອງຢູ່ໃນກອບຂອງຂໍ້ກຳນົດໃນມາດຕາ 8 ຂອງປະມວນກົດໝາຍແພ່ງ.
ຕົວຢ່າງ	1. **ຫຼັກການເຄົາລົບສິດເສລີພາບ ແລະ ມີຄວາມສະໝັກໃຈ** **ກ** ຂາຍຄວາຍແມ່ 1 ໂຕລາຄາ 5.000.000 ກີບໃຫ້ **ຂ. ຂ** ຈ່າຍເງິນຄືບຖ້ວນໃຫ້ **ກ** ແລ້ວ **ກ** ກໍມອບຄວາຍແມ່ໂຕດັ່ງກ່າວໃຫ້ **ຂ** ໂດຍບໍ່ມີການບັງຄັບນາບຂູ່ ຕົວະຍົວະຫຼອກລວງກັນຈາກຝ່າຍໃດໜຶ່ງ. 2. **ຫຼັກການ ສະເໝີພາບຕໍ່ໜ້າກົດໝາຍ** **ກ** ອາຍຸ 25 ປີ, ອາຊີບນັກທຸລະກິດ, ລະດັບການສຶກສາປະລິນຍາເອກ ຢູ່ນະຄອນຫຼວງວຽງຈັນ ເຮັດສັນຍາຊື້ຂາຍຊາຂຽວ ກັບ **ຂ** ອາຍຸ 45 ປີ, ອາຊີບຊາວສວນປູກຊາ, ລະດັບການສຶກສາ ປະຖົມ ຢູ່ແຂວງຜົ້ງສາລີ ໂດຍບໍ່ມີການ

	ຈຳແນກອາຍຸ, ອາຊີບ, ພູມລຳເນົາ ແລະ ລະດັບການສຶກສາແຕ່ຢ່າງໃດ. 3. **ຫຼັກການ ມີເຈດຕະນາດີ ແລະ ບໍລິສຸດໃຈ** **ກ** ຕົກລົງເຊົ່າລົດນຳ **ຂ** ຊຶ່ງ **ຂ** ໄດ້ແຈ້ງໃຫ້ຮູ້ກ່ຽວກັບຈຸດບົກພ່ອງຂອງລົດເຊັ່ນ ປະຕູລ່ອກຍາກ - ໄຂຍາກ ແຕ່ **ກ** ກໍເຫັນດີເຊົ່າລົດ ແລະ ຈະລະມັດລະວັງໃນການນຳໃຊ້. 4. **ຫຼັກການ ເຄົາລົບ ແລະ ປະຕິບັດກົດໝາຍ** **ກ** ຕົກລົງຊື້ຊີ້ນໝູຈຳນວນ 30 ກິໂລກຣາມ ນຳ **ຂ** ໂດຍຕົກລົງກັນວ່າ **ຂ** ຕ້ອງສົ່ງຊີ້ນໝູຈຳນວນດັ່ງກ່າວໃຫ້ **ກ** ໃນຕອນເຊົ້າຂອງວັນທີ 1 ມັງກອນ 2022. ເມື່ອມາຮອດວັນເວລາດັ່ງກ່າວ **ຂ** ກໍໄດ້ສົ່ງຊີ້ນໝູຄົບຕາມຈຳນວນໃຫ້ **ກ** ແລະ **ກ** ກໍຈ່າຍເງິນຄ່າຊີ້ນໝູຄົບຖ້ວນໃຫ້ **ຂ.** 5. **ຫຼັກການ ເຄົາລົບ ແລະ ນັບຖືຮີດຄອງປະເພນີອັນດີງາມ ຂອງຊາດ** **ກ** (ຝ່າຍຊາຍ) ແລະ **ຂ** (ຝ່າຍຍິງ) ມີຄວາມຮັກມັກກັນ ຈະເອົາກັນເປັນຜົວເມຍ. ຈາກນັ້ນ, **ກ** ໄດ້ໄປສູ່ຂໍ **ຂ** ຕາມຮີດຄອງປະເພນີ. 6. **ຫຼັກການ ຮັບຜິດຊອບຕໍ່ຄວາມເສຍຫາຍທາງແພ່ງ:** ບໍລິສັດຂົນສົ່ງ **ກ** ສົ່ງເຄື່ອງ **ຂ** ໄປໃຫ້ **ຄ** ໃນລະຫວ່າງການຂົນສົ່ງເຄື່ອງໃຫ້ **ຄ** ລົດຂົນສົ່ງ **ກ** ເກີດອຸບປະຕິເຫດ ເຮັດໃຫ້ເຄື່ອງ ຂອງ **ຄ** ແຕກ, ຕໍ່ກັບຄວາມເສຍຫາຍທີ່ເກີດຂຶ້ນນີ້ **ກ** ຕ້ອງໄດ້ຮັບຜິດຊອບ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 5 ວັກ 1 ຫຼັກການກ່ຽວກັບຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ຂອງ ກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ປີ 2008, ເພື່ອໃຫ້ຫຼັກການພື້ນຖານຂອງການເຮັດສັນຍານັ້ນໃຫ້ສອດຄ່ອງກັບຫຼັກການພື້ນຖານຂອງສາຍພົວພັນທາງແພ່ງ ທີ່ໄດ້ກຳນົດໃນພາກບົດບັນຍັດທົ່ວໄປ ຊຶ່ງສາມາດນຳໃຊ້ໃນພາກອື່ນໄດ້.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 8, 9,10,11,12, 13 ແລະ 14 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ໝວດທີ 2
ການເຮັດສັນຍາ

ມາດຕາ 364 ສັນຍາ

ສັນຍາ ແມ່ນ ການຕົກລົງ ລະຫວ່າງ ຄູ່ສັນຍາ ຊຶ່ງພາໃຫ້ສິດ ແລະ ພັນທະທາງແພ່ງເກີດຂຶ້ນ, ປ່ຽນແປງ ຫຼື ສິ້ນສຸດລົງ.

ສັນຍາ ອາດຈະເຮັດຂຶ້ນ ລະຫວ່າງ:

1. ອົງການຈັດຕັ້ງຂອງລັດ ຫຼື ລວມໝູ່ດ້ວຍກັນ;
2. ອົງການຈັດຕັ້ງຂອງລັດ ຫຼື ລວມໝູ່ກັບ ນິຕິບຸກຄົນອື່ນ ຫຼື ບຸກຄົນ;
3. ນິຕິບຸກຄົນ ຫຼື ບຸກຄົນດ້ວຍກັນ;
4. ນິຕິບຸກຄົນ ກັບ ບຸກຄົນ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ກ່ຽວກັບຄວາມໝາຍຂອງສັນຍາ ແລະ ຮູບແບບການເຮັດສັນຍາຂອງຄູ່ສັນຍາ.
ຕົວຢ່າງ	**ກໍລະນີຂອງອັກ 2 ຂໍ້ 1 ຂອງ ມາດຕານີ້:** 1. ກະຊວງ **ກ** ເຮັດສັນຍາ ຊື້ຂາຍ ຢາງພາລາ ກັບກະຊວງ **ຂ.** 2. ສະຫາກອນ **ກ** ເຮັດສັນຍາຊື້ຂາຍ ມັນດ້າງ, ສາລີ ແລະ ເຜືອກ ກັບ ກຸ່ມກະສິກອນ **ຂ.** **ກໍລະນີຂອງອັກ 2 ຂໍ້ 2 ຂອງ ມາດຕານີ້:** 3. ຫ້ອງການກະຊວງ **ກ** ຕົກລົງເຮັດສັນຍາກໍ່ສ້າງອາຄານ 5 ຊັ້ນ ກັບບໍລິສັດກໍ່ສ້າງຈຳກັດຜູ້ດຽວ **ຄ.** 4. ສະຫະກອນ **ກ** ເຮັດສັນຍາເຊົ່າພາຫະນະການຜະລິດກະສິກຳ ກັບກະຊວງ **ຂ.** 5. ຫ້ອງການກະຊວງ **ກ** ຕົກລົງເຮັດສັນຍາ ຊື້ຂາຍ ຜັກປອດສານພິດ ນຳສະຫະ ກອນລວມໝູ່ ຂອງບ້ານ. 6. ຫ້ອງການພັດທະນາຕົວເມືອງ **ກ** ເຮັດສັນຍາອະນາໄມສວນສາທາລະນະ ກັບ **ຂ.** **ກໍລະນີຂອງອັກ 2 ຂໍ້ 3 ຂອງມາດຕານີ້:** 7. ບໍລິສັດ **ກ** ເຮັດສັນຍາເຊົ່າເຮືອນ ກັບ ບໍລິສັດ **ຂ** ໃນກຳນົດເວລາ 1 ປີ. 8. **ກ** ມີຄວາຍເຖິກ ໜຶ່ງໂຕ ເຮັດສັນຍາແລກປ່ຽນຄວາຍແມ່ໜຶ່ງໂຕກັບ **ຂ.** **ກໍລະນີຂອງອັກ 2 ຂໍ້ 4 ຂອງມາດຕານີ້:** 9. ທະນາຄານ **ກ** ເຮັດສັນຍາກູ້ຢືມເງິນຈຳນວນ 10.000.000 ກັບ **ຂ** ໃນກຳນົດເວລາ 2 ປີ.
ເຫດຜົນໃນການຮັກສາເນື້ອໃນເດີມ	ມາດຕານີ້ຍັງຮັກສາເນື້ອໃນ ມາດຕາ 8 ສັນຍາ ຂອງ ກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ປີ 2008.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 385 ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2015.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 365 ລັກສະນະຂອງສັນຍາ

ສັນຍາ ອາດຈະມີລັກສະນະ ຝ່າຍດຽວ ຫຼື ສອງຝ່າຍ.

ສັນຍາຝ່າຍດຽວ ແມ່ນ ການຕົກລົງ ທີ່ຝ່າຍດຽວມີພັນທະ ຊຶ່ງຕ້ອງປະຕິບັດຕໍ່ອີກຝ່າຍໜຶ່ງ ໂດຍບໍ່ມີການຕອບແທນ.

ສັນຍາສອງຝ່າຍ ແມ່ນ ການຕົກລົງ ຊຶ່ງໃນນັ້ນແຕ່ລະຝ່າຍ ມີພັນທະຕໍ່ກັນ.

ຈຸດປະສົງ	ເພື່ອກຳນົດກ່ຽວກັບການຈຳແນກລັກສະນະຂອງສັນຍາ ທີ່ແຕກຕ່າງກັນ ໂດຍອີງໃສ່ສິດ ແລະ ພັນທະ ທີ່ເກີດຂຶ້ນຕໍ່ຄູ່ສັນຍາ ທີ່ເຂົ້າຮ່ວມເຮັດສັນຍານັ້ນ, ຖ້າຝ່າຍໜຶ່ງມີພຽງພັນທະ ແມ່ນສັນຍາຝ່າຍດຽວ, ຖ້າວ່າ ຕ່າງຝ່າຍຕ່າງມີສິດແລະພັນທະເຊິ່ງກັນ ແລະ ກັນ. ເຊັ່ນ: ສິດໃນການຊື້ ແລະ ພັນທະໃນການຂາຍ, ສິດ

	ໃນການທວງເງິນ ກັບ ພັນທະໃນການຊຳລະເງິນ, ສິດໃນການຢືມ ກັບ ພັນທະໃນການໃຫ້ຢືມເງິນ, ສິດໃນການທວງຄ່າເຊົ່າ ກັບ ພັນທະໃນການຈ່າຍຄ່າເຊົ່າ ເຫຼົ່ານີ້ເປັນຕົ້ນ. ເອີ້ນວ່າ ສັນຍາສອງຝ່າຍ
ຕົວຢ່າງ	**ສັນຍາຝ່າຍດຽວ** **ກ** ຊື້ໂທລະສັບ ເພື່ອເປັນຂອງຂັວນໃຫ້ **ຂ.** ໂດຍ **ຂ** ເປັນເພື່ອນທີ່ດີ ແລະ ມີດຕະພາບພິເສດສຳລັບ **ກ. ກ** ໄດ້ຕົກລົງກັບ **ຂ** ວ່າຈະມອບໂທລະສັບດັ່ງກ່າວ ໃຫ້ **ຂ.** ນີ້ແມ່ນສັນຍາມອບຊັບ ເປັນສັນຍາທີ່ມີລັກສະນະຝ່າຍດຽວ. **ສັນຍາສອງຝ່າຍ** **1: ກ** ເປັນເຈົ້າຂອງໂຮງງານເຟີນິເຈີ ໄດ້ເຮັດສັນຍາກັບ **ຂ** ເພື່ອວ່າຈ້າງ ເຮັດໂຕະ ຕັ່ງ ຈຳນວນ 5 ຊຸດ ພາຍໃນກຳນົດເວລາ 10 ວັນ. **2: ກ** ຕ້ອງການເຊົ່າລົດຕູ້ 15 ບ່ອນນັ່ງ ຂອງບໍລິສັດ **ອ,** ກຳນົດເວລາເຊົ່າ 3 ວັນ (ວັນລະ 900.000ກີບ). ບໍລິສັດ **ອ** ມີພັນທະມອບລົດໃຫ້ **ກ** ເຊົ່າ ແລະ ມີສິດທວງເອົາຄ່າເຊົ່າ, ທວງເອົາຄ່າເສຍຫາຍໃນກໍລະນີລົດມີການສົ່ງຊ້າກວ່າກຳນົດເວລາທີ່ໄດ້ຕົກລົງກັນໃສັນຍາ ຫຼື ລົດມີການເປ່ເພຍ້ອນບໍລິສັດຂອງ **ອ.** ສ່ວນ **ກ** ມີສິດນຳໃຊ້, ຄອບຄອງລົດ ແລະ **ກ** ມີພັນທະຈ່າຍຄ່າເຊົ່າລົດ ຫຼື ຄ່າສ້ອມແປງໃນກໍລະນີໄດ້ເຮັດໃຫ້ລົດເປ່ເພ ຫຼື ສົ່ງລົດຊ້າກວ່າກຳນົດເວລາທີ່ໄດ້ຕົກລົງກັນໃຫ້ແກ່ ບໍລິສັດ **ອ.** ນີ້ແມ່ນສັນຍາທີ່ມີລັກສະນະສອງຝ່າຍ.
ເຫດຜົນໃນການປັບປຸງ	ມາດຕານີ້ໄດ້ປັບປຸງມາຈາກ ມາດຕາ 9 ຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ປີ 2008, ຊຶ່ງໄດ້ຕັດເອົາຄຳວ່າ "**ຫຼາຍຝ່າຍ**" ໃນວັກ 3 ອອກ ເນື່ອງຈາກວ່າ ສອງຝ່າຍຂຶ້ນໄປ ກໍມີຄວາມໝາຍວ່າ ຫຼາຍຝ່າຍແລ້ວ. ນອກຈາກນັ້ນ, ຍັງໄດ້ຕັດ ວັກ 4 ທີ່ໄດ້ ກຳນົດວ່າ "**ສັນຍາດັ່ງກ່າວ ແມ່ນສັນຍາທາງແພ່ງ ຊຶ່ງຈະກາຍເປັນສັນຍາການຄ້າ ຖ້າວ່າວັດຖຸປະສົງຂອງສັນຍາ ຫາກແມ່ນການເຄື່ອນ ໄຫວທຸລະກິດ**" ອອກ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 402 ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2015.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 366 ເງື່ອນໄຂຂອງສັນຍາ

ເງື່ອນໄຂຂອງສັນຍາ ໃຫ້ປະຕິບັດຕາມເງື່ອນໄຂຂອງນິຕິກຳ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 17 ຂອງ ປະມວນກົດໝາຍສະບັບນີ້.

ນອກຈາກນີ້ ສັນຍາຍັງຕ້ອງມີເຫດຜົນ ທີ່ຖືກຕ້ອງຕາມກົດໝາຍ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ກ່ຽວກັບສັນຍາກໍເປັນນິຕິກຳປະເພດໜຶ່ງນັ້ນ, ຕ້ອງຄົບຖ້ວນດ້ວຍ 4 ເງື່ອນໄຂຂອງນິຕິກຳທີ່ໄດ້ກຳນົດໄວ້ໃນມາດຕາ 17 ຄື: ວັດຖຸປະສົງ, ຄວາມສະໝັກໃຈ, ຄວາມສາມາດທາງດ້ານການປະພຶດ ແລະ ຮູບການ. ເງື່ອນໄຂຂອງສັນຍາ ແມ່ນຕ້ອງມີເຫດຜົນ ຊຶ່ງເຫດຜົນນີ້ຕ້ອງຖືກຕ້ອງຕາມກົດໝາຍ.

ຕົວຢ່າງ	ໃນວັນທີ 1 ພະຈິກ 2019. **ກ** ແລະ **ຂ** ໄດ້ມີການຕົກລົງເຮັດສັນຍາຊື້ຂາຍສາລີ (ຄວາມສະໝັກໃຈແມ່ນ **ກ** ແລະ **ຂ** ບໍ່ໄດ້ບັງຄັບກັນ) ຈຳນວນ 50 ໂຕນ ຢ່າງເປັນລາຍລັກອັກສອນ (ຮູບການຂອງສັນຍາເປັນລາຍລັກອັກສອນ). **ກ** (ຜູ້ຊື້) ອາຍຸ 30 ປີ ແລະ **ຂ** (ຜູ້ຂາຍ) ອາຍຸ 45 ປີ (ຄວາມສາມາດທາງດ້ານການປະພຶດກໍຄື **ກ** ແລະ **ຂ** ບັນລຸນິຕິພາວະ ແລະ ບໍ່ເປັນບ້າເສຍຈິດ). ໃນສັນຍາຊື້ຂາຍສາລີນີ້ທັງສອງຕົກລົງລາຄາໂຕນລະ 3.000.000ກີບ (ວັດຖຸປະສົງແມ່ນສາລີ ແລະ ລາຄາຊື້ຂາຍ). **ກ** ຕ້ອງການເອົາສາລີເພື່ອໄປຂາຍໃຫ້�โຮງງານຜະລິດຫົວອາຫານຂອງ **ຈ.** ໂດຍ **ກ** ຈະໄດ້ກຳໄລຈາກການຂາຍ 50% ຕໍ່ໂຕ່ນໃຫ້ **ຈ.** ສ່ວນ **ຂ** ກໍໄດ້ກຳໄລ 40% ຕໍ່ໂຕນຈາກການຂາຍສາລີທີ່ຂາຍໃຫ້ **ກ** (ເຫດຜົນຂອງສັນຍາແມ່ນຕ່າງຝ່າຍຕ່າງໄດ້ຮັບຜົນກຳໄລຈາກສັນຍາຊື້ຂາຍ). ໃນສັນຍາໄດ້ມີການຕົກລົງກັນວ່າໃຫ້ **ກ** ຈ່າຍເງິນກ່ອນເຄິ່ງໜຶ່ງໃນມື້ເຮັດສັນຍາ ແລ້ວຮອດວັນທີ 15 ເດືອນ ພະຈິກ 2019 **ຂ** ຕ້ອງຂົນສົ່ງສາລີປະເພດ, ຄຸນນະພາບ ແລະ ຄົບຕາມຈຳນວນທີ່ຕົກລົງກັນໃຫ້ **ກ**. ຮູ້ວ່າກ່ອນຈະເຮັດສັນຍານຳກັນທັງສອງກໍໄດ້ໄປເບິ່ງສາລີຢູ່ສາງເກັບຂອງ **ຂ** ແມ່ນມີຄວາມຈິງແທ້. ສະນັ້ນ, ເງື່ອນໄຂຂອງສັນຍາຈຶ່ງເຫັນວ່າ: ຄວາມສະໝັກໃຈແມ່ນ **ກ** ແລະ **ຂ** ບໍ່ໄດ້ບັງຄັບກັນ; ຄວາມສາມາດທາງດ້ານການປະພຶດກໍຄື **ກ** ແລະ **ຂ** ບັນລຸນິຕິພາວະ ແລະ ບໍ່ເປັນບ້າເສຍຈິດ; ວັດຖຸປະສົງ ແມ່ນສາລີ ແລະ ລາຄາຊື້ຂາຍ; ເຫດຜົນຂອງສັນຍາ ແມ່ນຕ່າງຝ່າຍຕ່າງໄດ້ຮັບຜົນກຳໄລຈາກສັນຍາຊື້ຂາຍ; ຮູບການຂອງສັນຍາ ເປັນລາຍລັກອັກສອນ. ກະລຸນາເບິ່ງຕົວຢ່າງຂອງມາດຕາ 367 ຫາ 369 ປະມວນກົດໝາຍແພ່ງ.
ເຫດຜົນໃນການປັບປຸງ	ມາດຕານີ້ໄດ້ປັບປຸງມາຈາກ ມາດຕາ 10 ເງື່ອນໄຂຂອງສັນຍາ ຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ປີ 2008, ເຫດຜົນການຍົກ 4 ເງື່ອນໄຂຂອງການເຮັດສັນຍາຕາມມາດຕາ 10 ກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ປີ 2008, ອອກໄປໄວ້ ມາດຕາ 17 ເພື່ອເປັນອັນລວມໃນການເຮັດນິຕິກຳ ສະນັ້ນ ເງື່ອນໄຂ ຂອງການເຮັດສັນຍາສະເພາະແມ່ນຕ້ອງມີເຫດຜົນເພີ່ມອີກ 1 ເງື່ອນໄຂ ຈຶ່ງຖືວ່າ ເປັນສັນຍາທີ່ຖືກຕ້ອງຕາມກົດໝາຍ ຊຶ່ງເງື່ອນໄຂດັ່ງກ່າວໄດ້ກຳນົດໄວ້ໃນມາດຕາ 368.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 17, 18, 19, 20, 21 ແລະ 368 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ເງື່ອນໄຂຂອງສັນຍາ ມັນຈຳເປັນຈະຕ້ອງມີ [ເຫດຜົນ ທີ່ຖືກຕ້ອງຕາມກົດໝາຍ] (ມາດຕາ 366 ວັກ 2, ມາດຕາ 368) ແຕ່ກໍລະນີຫາກປາສະຈາກເຫດຜົນ, ດັ່ງກ່າວ ສັນຍາຈະເປັນໂມຄະຫຼືບໍ່. ແລະ ຖ້າເປັນໂມຄະ ມັນຈະເປັນໂມຄະເດັດຂາດ ຫຼື ບໍ່ເດັດຂາດ ຊຶ່ງໃນຈຸດນີ້ ແມ່ນຈຳເປັນຕ້ອງເຮັດໃຫ້ເຫັນຢ່າງຈະແຈ້ງ.

ມາດຕາ 367 ຄວາມສະໝັກໃຈຂອງຄູ່ສັນຍາ

ຄວາມສະໝັກໃຈຂອງຄູ່ສັນຍາ ແມ່ນ ຄວາມສະໝັກໃຈ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 19 ຂອງ ປະມວນກົດໝາຍສະບັບນີ້.

ຈຸດປະສົງ	ເພື່ອກຳນົດກ່ຽວກັບ ຄວາມສະໝັກໃຈຂອງຄູ່ສັນຍາຕາມມາດຕາ 19 ຂອງ ພາກທີ 1. ນອກຈາກນັ້ນແລ້ວສັນຍາຍັງຕ້ອງມາດ້ວຍຄວາມເພິ່ງພໍໃຈ ໂດຍ ປາດສະຈາກຄວາມບໍ່ເປັນທຳຕໍ່ຄູ່ສັນຍາ. ສັນຍາທີ່ບໍ່ເປັນທຳແມ່ນຖືວ່າບໍ່ມີ ຄວາມສະໝັກໃຈລະຫວ່າງຄູ່ສັນຍາ.
ຕົວຢ່າງ	**1: ກ** ຝາກລົດໃຫຍ່ກັບ **ຂ** ຊຶ່ງບີ້ຝາກລົດນັ້ນມີເນື້ອໃນຂຽນວ່າ ກໍລະນີເກີດ ຄວາມເສຍຫາຍເປ່ເພຕໍ່ລົດທີ່ຝາກນັ້ນ ທາງພວກເຮົາຈະບໍ່ໄດ້ມີຄວາມ ຮັບຜິດຊອບ ຍ້ອນວ່າ ພວກເຮົາມີໜ້າທີ່ພຽງແຕ່ຈັດສັນຄວາມເປັນລະບຽບ ຮຽບຮ້ອຍໃນການຈອດລົດ. ເຫັນວ່າ ເນື້ອໃນດັ່ງກ່າວໄດ້ສ້າງຄວາມອັບ ປະໂຫຍດ ຊຶ່ງໄດ້ຈ່າຍຄ່າຝາກລົດໃຫ້ແກ່ຜູ້ຮັບຝາກ ເຮັດໃຫ້ສັນຍານັ້ນບໍ່ ເປັນທຳ ແລະ ຜູ້ເປັນເຈົ້າຂອງລົດບໍ່ໄດ້ສະໝັກໃຈຮັບເອົາເນື້ອໃນນີ້. **2: ກ** ມີຄອມພິວເຕີມູນຄ່າ 9.000.000 ກີບ, ສ່ວນ **ຂ** ມີໂທລະສັບ ທີ່ມີ ມູນຄ່າ 11.000.000 ກີບ ທັງສອງມີຄວາມພໍໃຈຈຶ່ງຕົກລົງແລກປ່ຽນຊັບ ສິ່ງຂອງນຳກັນ ເຖິງແມ່ນວ່າລາຄາຂອງຊັບມີການຫຼຸດລົ່ນກັນ ແຕ່ທັງສອງກໍ ເຫັນດີ. ສະນັ້ນ, ຈຶ່ງໄດ້ສ້າງສັນຍາແລກປ່ຽນຄອມພິວເຕີ ກັບ ໂທລະສັບ ແລ້ວລົງລາຍເຊັນ ແລະ ມອບຊັບ ໃຫ້ແກ່ກັນ. **3**: ພໍ່ຂອງ **ກ** ເຈັບໜັກ **ກ** ມີຄວາມຈຳເປັນຕ້ອງໄດ້ໃຊ້ເງິນ, **ກ** ຈຶ່ງຂາຍສິດນຳ ໃຊ້ທີ່ດິນ ໃຫ້ **ຂ** ໃນລາຄາຕົວຈິງ 10.000.000 ກີບ, **ກ** ສະເໜີຂາຍ 8.000.000 ກີບ, ແຕ່ **ຂ** ສະເໜີຊື້ເອົາ ພຽງແຕ່ 2.000.000 ກີບ ຍ້ອນ ຮູ້ວ່າ **ກ** ມີຄວາມຈຳເປັນ, ຖ້າວ່າບໍ່ຂາຍໃນລາຄານີ້ **ຂ** ກໍ່ບໍ່ຊື້ ຍ້ອນຄວາມ ຈຳເປັນດັ່ງກ່າວ **ກ** ຈຳຕ້ອງຂາຍທີ່ດິນຕອນນັ້ນ. ຕໍ່ມາ **ກ** ເຫັນວ່າ ໄດ້ຮັບ ຄວາມອັບປະໂຫຍດ ຈຶ່ງຂໍລົບລ້າງສັນຍາ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກມາດຕາ 11 ວັກ 5 ຄວາມສະໝັກໃຈຂອງຄູ່ສັນຍາ ຂອງກົດໝາຍວ່າດ້ວຍ ຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ປີ 2008, ເພື່ອ ໃຫ້ເຂົ້າໃຈແຈ້ງ ແລະ ຊັດເຈນ ກ່ຽວກັບຄວາມສະໝັກໃຈຂອງຄູ່ສັນຍາ ແລະ ກໍລະນີໃດທີ່ຖືວ່າບໍ່ແມ່ນຄວາມສະໝັກໃຈຂອງຄູ່ສັນຍານອກຈາກທີ່ໄດ້ກຳນົດ ໄວ້ໃນມາດຕາ 19 ຂອງປະມວນກົດໝາຍແພ່ງ. ຄວາມອັບປະ�โຫຍດໃນມາດຕານີ້ ໝາຍເຖິງຄວາມອັບປະໂຫຍດທີ່ກຳນົດໃນ ມາດຕາ 19 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 19, 24 ວັກ1, 27, 28, 376, 377 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 368 ເຫດຜົນຂອງສັນຍາ

ເຫດຜົນຂອງສັນຍາ ແມ່ນ ສິ່ງຊຸກຍູ້ໃຫ້ເຮັດສັນຍາ ແລະ ໃຫ້ຄູ່ສັນຍານັ້ນ ໄດ້ປະຕິບັດສິດ ແລະ ພັນທະຂອງຕົນ.

ເຫດຜົນຂອງສັນຍາ ຕ້ອງໃຫ້ມີຈິງ ແລະ ຖືກຕ້ອງຕາມກົດໝາຍ.

ຈຸດປະສົງ	ເພື່ອກຳນົດກ່ຽວກັບສິ່ງຈູງໃຈທີ່ພາໃຫ້ຄູ່ສັນຍານັ້ນສາມາດຕົກລົງ ແລະ ເຫັນດີສ້າງນິຕິກຳໃດໜຶ່ງຂຶ້ນນຳກັນ ຊຶ່ງເປັນການກະທຳທີ່ຖືກຕ້ອງ ແລະ ມີຜົນບັງຄັບໃຫ້ທັງສອງຕ້ອງໄດ້ປະຕິບັດຕໍ່ກັນ. ສິ່ງຈູງໃຈນັ້ນຕ້ອງມີຈິງຊຶ່ງສາມາດນຳມາໃຊ້ໄດ້ ແລະ ພ້ອມທັງສອດຄ່ອງກັບກົດໝາຍ.
ຕົວຢ່າງ	**1: ກ** ໄດ້ເຮັດສັນຍາກູ້ຍືມເງິນຢ່າງເປັນລາຍອັກສອນນຳທະນາຄານ **ຂ** ເພື່ອນຳເງິນໄປລົງທຶນປຸກເຂົ້າ ແລະ ລ້ຽງປາຕາມບົດວິພາກເສດຖະກິດ. ທະນາຄານກວດກາເບິ່ງແລ້ວເຫັນວ່າມີເຫດຜົນ ຖືກຕ້ອງກັບນະໂຍບາຍຂອງທະນາຄານ ຈຶ່ງໃຫ້ **ກ** ປະກອບເອກະສານຕາມລະບຽບການຂອງທະນາຄານແລ້ວກໍອະນຸມັດເງິນກູ້ຍືມໃຫ້ ແລະ ກຳນົດອັດຕາດອກເບ້ຍຕ່ຳ ໃນກຳນົດເວລາ 5 ປີ. **2: ກ** ໄປຊື້ລົດ ນຳ ບໍລິສັດ **ຂ** ໃນສັນຍາຊື້ຂາຍດັ່ງກ່າວ **ກ** ບໍ່ຈຳເປັນບອກວ່າຈະຊື້ລົດໄປເຮັດຫຍັງ ພຽງແຕ່ **ກ** ມີພັນທະຈ່າຍເງິນໃຫ້ຄົບຖ້ວນ ແລະ ໄດ້ຮັບສິດໃນກຳມະສິດຈາກລົດຄັນດັ່ງກ່າວ.
ເຫດຜົນໃນການຮັກສາເນື້ອໃນເດີມ	ມາດຕານີ້ຍັງຮັກສາເນື້ອໃນຂອງ ມາດຕາ 14 ເຫດຜົນຂອງສັນຍາ ຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ປີ 2008.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 18 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ເຫດຜົນຂອງສັນຍາ (ມາດຕານີ້) ທີ່ເປັນເງື່ອນໄຂທາງອັດຕະວິໄສ ກັບ ວັດຖຸປະສົງ ຂອງສັນຍາຕ້ອງຊັດເຈນ, ມີຈິງ, ຖືກຕ້ອງຕາມກົດໝາຍ, ບໍ່ຂັດກັບຄວາມ ເປັນລະ ບຽບຮຽບຮ້ອຍຂອງສັງຄົມ ແລະ ສາມາດປະຕິບັດໄດ້ (ມາດຕາ 18) ທີ່ເປັນ ເງື່ອນໄຂທາງພາວະວິໄສນັ້ນ ຖ້າມູມມອງຂອງມັນຫາກແຕກຕ່າງກັນ, ກໍສາມາດ ຄິດໄດ້ວ່າ ມາດຕາ 18 ກັບມາດຕານີ້ ມີເງື່ອນໄຂທີ່ແຕກຕ່າງກັນ.

ມາດຕາ 369 ຮູບການຂອງສັນຍາ

ຮູບການຂອງສັນຍາ ໃຫ້ອີງຕາມຮູບການ ທີ່ໄດ້ກຳນົດໄວ້ໃນມາດຕາ 21 ຂອງປະມວນກົດໝາຍ ສະ ບັບນີ້.

ສັນຍາທີ່ເຮັດເປັນລາຍລັກອັກສອນອາດຈະຂຽນດ້ວຍ ມື, ພິມດີດ ຫຼື ພິມດ້ວຍເຄື່ອງເອເລັກໂຕຣນິກ ໂດຍຄູ່ສັນຍາເອງ ຫຼື ຜູ້ຕາງໜ້າ ແລະ ຕ້ອງລົງວັນທີ, ເດືອນ, ປີ, ມີລາຍເຊັນຂອງຄູ່ສັນຍາ ຫຼື ຜູ້ຕາງໜ້າຂອງຄູ່ສັນຍາ ຫຼື ຄູ່ສັນຍາ ອາດຈະແປະໂປ້ມືຂອງຕົນໃສ່ຕື່ມອີກກໍໄດ້.

ສັນຍາທີ່ເຮັດເປັນລາຍລັກອັກສອນ ອາດມີການເຂົ້າຮ່ວມຂອງພະຍານ ຫຼື ນາຍບ້ານ ເພື່ອຢັ້ງຢືນການເຮັດສັນຍານັ້ນກໍໄດ້.

ຄູ່ສັນຍາ ສາມາດນຳເອົາສັນຍາເປັນລາຍລັກອັກສອນໄປຢັ້ງຢືນຄວາມຖືກຕ້ອງ, ສອດຄ່ອງກັບຄວາມເປັນຈິງ ແລະ ກົດໝາຍ ນຳນາຍທະບຽນສານ.

ຈຸດປະສົງ	ເພື່ອກຳນົດກ່ຽວກັບສັນຍາສາມາດເຮັດໄດ້ຫຼາຍຮູບການ ເຊັ່ນ ອາດເຮັດປາກເປົ່າ, ລາຍລັກອັກສອນ ຫຼື ຮູບການອື່ນ. ສັນຍາທີ່ຕ້ອງເຮັດເປັນລາຍລັກອັກສອນ ຫຼື ປາກເປົ່າແມ່ນອີງຕາມລັກສະນະສະເພາະ ຂອງແຕ່ລະສັນຍາ. ສັນຍາທີ່ເຮັດເປັນລາຍລັກອັກສອນຕ້ອງມີລາຍເຊັນ ຫຼື ແປະໂປ້ມືຂອງຄູ່ສັນຍາ ຫຼື ຜູ້ຕາງໜ້າຂອງຄູ່ສັນຍາຝ່າຍໃດໜຶ່ງ ແລະ ສາມາດມີພະຍານເຂົ້າຮ່ວມ ຫຼື ມີການຢັ້ງຢືນຈາກນາຍບ້ານ ແລະ ມີການຢັ້ງຢືນຄວາມຖືກຕ້ອງນຳນາຍທະບຽນສານ.
ຕົວຢ່າງ	1. **ສັນຍາເປັນລາຍລັກອັກສອນ:** ໃນວັນທີ 1 / 1 /2017 **ກ** ໄດ້ກູ້ຢືມເງິນ ຈຳນວນ 5,000,000 ກີບ, ດອກເບ້ຍ 1 % ຕໍ່ເດືອນ ນຳ **ຂ**. ຊຶ່ງມີກຳນົດເວລາໃນການກູ້ຢືມ 1 ປີ ຄື ວັນທີ່ 31 / 12 / 2017 **ກ** ຕ້ອງໄດ້ຊຳລະຕົ້ນທຶນ ແລະ ດອກເບ້ຍຄົບຕາມຈຳນວນໃຫ້ **ຂ**. ສະນັ້ນ, ສັນຍາກູ້ຢືມຕ້ອງກຳນົດລະອຽດ ກ່ຽວກັບເນື້ອໃນຂອງສັນຍາ ແລະ ຕ້ອງລົງລາຍເຊັນ ຫຼື ແປະໂປ້ ຂອງຄູ່ສັນຍາ ເພື່ອຄວາມຖືກຕ້ອງ ແລະ ມີຜົນໃຊ້ໄດ້ທາງດ້ານກົດໝາຍ. **ກ** ກັບ **ຂ** ໄດ້ໃຫ້ນາຍບ້ານເຂົ້າຮ່ວມ ເພື່ອຢັ້ງຢືນ ກ່ຽວກັບການເຮັດສັນຍາເປັນລາຍລັກອັກສອນ, ພ້ອມທັງໄດ້ຂໍໃຫ້ **ຄ** ພະນັກງານ ທະບຽນສານ ຢັ້ງຢືນຄວາມສອດຄ່ອງກັບຕົວຈິງ ແລະ ກົດໝາຍ. 2. **ສັນຍາທາງປາກເປົ່າ:** ໃນເວລາ 11 ໂມງ 30 ຕອນທ່ຽງ **ກ** ໄດ້ໂທລະສັບສັ່ງເຝີຈຳນວນ 1 ຖ້ວຍ ລາຄາ 20.000 ກີບ ນຳຮ້ານອາຫານ **ຂ**. ໂດຍໃຫ້ຮ້ານອາຫານ **ຂ** ມາສົ່ງເຝີ ໃຫ້ **ກ** ຢູ່ທີ່ຫ້ອງການ ຂອງ **ກ**.
ເຫດຜົນໃນການປັບປຸງ	ມາດຕາ 15 ວັກ 1 ຮູບການຂອງສັນຍາ ຂອງກົດໝາຍກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ປີ 2008 ໄດ້ຍ້າຍໄປໃສ່ມາດຕາ 21 ຂອງ ປະມວນກົດໝາຍແພ່ງ. ແຕ່ກ່ອນໄດ້ກຳນົດຈຳນວນພະຍານ ແຕ່ໃນມາດຕານີ້ ບໍ່ໄດ້ກຳນົດຈຳນວນ ພະຍານ ຄູ່ສັນຍາສາມາດນຳໃຊ້ພະຍານຈັກຄົນກໍ່ໄດ້. "**ໂດຍທົ່ວໄປແລ້ວເຫດຜົນທີ່ຈຳເປັນຈະຕ້ອງເຮັດສັນຍາເປັນລາຍລັກອັກສອນແມ່ນ 1) ເພື່ອເປັນຫຼັກຖານ, 2) ສັນຍາທີ່ມີໄລຍະເວລາຍາວນານ, 3) ຄູ່ສັນຍາຝ່າຍໃດໜຶ່ງແມ່ນອົງການຈັດຕັ້ງລັດ ຫຼື ນິຕິບຸກຄົນ, 4) ໃນກໍລະນີສັນຍາຫາກມີຄວາມຈຳເປັນທີ່ຈະຕ້ອງເຮັດດ້ວຍຄວາມລະມັດລະວັງ**". ສັນຍາສາມາດເຮັດໄດ້ຫຼາຍຮູບການ ເຊັ່ນ ອາດເຮັດປາກເປົ່າ, ລາຍລັກອັກສອນ ຫຼື ຮູບການອື່ນ. ສັນຍາທີ່ຕ້ອງເຮັດເປັນລາຍລັກອັກສອນ ແມ່ນສັນຍາທີ່ກົດໝາຍກຳນົດໃຫ້ເປັນລາຍລັກອັກສອນ ທັງນີ້ເພື່ອເປັນຫຼັກຖານ, ຫຼື ສັນຍາທີ່ມີອາຍຸຂອງສັນຍາຍາວນານ, ຫຼື ສັນຍາທີ່ຄູ່ສັນຍາຝ່າຍໃດຝ່າຍໜຶ່ງແມ່ນອົງການ ຈັດຕັ້ງລັດ ຫຼື ນິຕິບຸກຄົນ; ຫຼື ເປັນສັນຍາ ຊຶ່ງຕ້ອງໄດ້ໃຊ້ຄວາມລະມັດລະວັງ ໃນການເຮັດສັນຍາ. ສ່ວນສັນຍາທາງປາກເປົ່າກໍເປັນຫຼັກຖານໜຶ່ງແຕ່ສັນຍາ ໃນລັກສະນະນີ້ມີຄວາມຮັບ ຜິດຊອບທີ່ບໍ່ເຄັ່ງຄັດ ແລະ ເປັນສັນຍາລະຫວ່າງ ບຸກຄົນດ້ວຍກັນ. ສ່ວນສັນຍາທີ່ເຮັດຂຶ້ນດ້ວຍຮູບການອື່ນກໍເປັນຫຼັກຖານໜຶ່ງຊຶ່ງຮູບການນີ້ຄູ່

	ສັນຍາບໍ່ໄດ້ສັນຍາຂຽນ ຫຼື ເວົ້າ ເຊິ່ງໜ້າກັນ ອາດຈະຕົກລົງກັນທາງໄກດ້ວຍເຄື່ອງທັນສະໄໝອື່ນເຊັ່ນ: ໂທລະສັບ, ຂໍ້ຄວາມ ຫຼື ວິດີໂອທາງໄກ ເປັນຕົ້ນ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 21, ມາດຕາ 414 ວັກ 3, ມາດຕາ 430 ວັກ 5, ມາດຕາ 434 ວັກ 6, ມາດຕາ 439 ວັກ 2, ມາດຕາ 465 ວັກ 3 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 370 ເນື້ອໃນຂອງສັນຍາ

ສັນຍາ ປະກອບດ້ວຍເນື້ອໃນຕົ້ນຕໍ ດັ່ງນີ້:

1. ວັນ, ເວລາ, ສະຖານທີ່ເຮັດສັນຍາ;
2. ຊື່, ນາມສະກຸນ ແລະ ບ່ອນຢູ່ ຂອງຄູ່ສັນຍາ;
3. ວັດຖຸປະສົງ, ລາຄາ, ກຳນົດເວລາປະຕິບັດ, ການຊຳລະ, ການນຳສົ່ງ;
4. ຂອບເຂດ, ປະລິມານ ແລະ ຄຸນນະພາບ ຂອງເປົ້າໝາຍ;
5. ສະຖານທີ່ປະຕິບັດສັນຍາ ແລະ ພັນທະໃນການແຈ້ງໃຫ້ແກ່ກັນຊາບ;
6. ຜົນສະທ້ອນຂອງການລະເມີດສັນຍາ;
7. ຮຸບການ ແລະ ອົງການແກ້ໄຂຂໍ້ຂັດແຍ່ງ;
8. ເງື່ອນໄຂຂອງການປ່ຽນແປງ ແລະ ການສິ້ນສຸດ ສັນຍາກ່ອນກຳນົດ.

ຈຸດປະສົງ	ເພື່ອກຳນົດກ່ຽວກັບຂໍ້ເທັດຈິງທີ່ເປັນເນື້ອໃນຕົ້ນຕໍຂອງສັນຍາ ແລະ ເພື່ອເຮັດໃຫ້ເຫັນຢ່າງຈະແຈ້ງກ່ຽວກັບອົງປະກອບທີ່ຈຳເປັນສຳລັບທຸກສັນຍາ.
ຕົວຢ່າງ	**1.** ສັນຍາກູ້ຢືມເງິນ ລະຫວ່າງ **ກ** ອາຍຸ 25 ປີ, ອາຊີບ ນັກທຸລະກິດ, ປັດຈຸບັນຢູ່ບ້ານ ຫ, ເມືອງ ອ, ແຂວງ ຣ (ຊຶ່ງເປັນຜູ້ໃຫ້ກູ້ຢືມ) ແລະ **ຂ** ອາຍຸ 25 ປີ, ອາຊີບ ຄ້າຂາຍ, ປັດຈຸບັນຢູ່ບ້ານ ສ, ເມືອງ ຊ, ແຂວງ ຍ (ຜູ້ກູ້ຢືມ), **ກ** ໄດ້ຕົກລົງໃຫ້ **ຂ** ກູ້ຢືມເງິນໃນຈຳນວນ 10,000,000 ກີບ ເພື່ອໄປລົງທຶນຄ້າຂາຍກ່ຽວກັບ ເສື້ອຜ້າ ໂດຍຄິດໄລ່ດອກເບ້ຍ 1 % ຕໍ່ເດືອນ ພາຍໃນກຳນົດເວລາ ໜຶ່ງປີ ແຕ່ວັນທີ 1 ມັງກອນ 2017 ຮອດວັນທີ 31 ທັນວາ 2017 ຊຶ່ງສະຖານທີ່ຊຳລະແມ່ນ ເຮືອນຂອງ **ກ** ຫຼື ໂອນເງິນເຂົ້າບັນຊີຂອງ **ກ** ຕາມກຳນົດເວລາ. **2.** ໃນວັນທີ 1 ມັງກອນ 2020 ເວລາ 10 ໂມງ **ກ** ໄດ້ເຮັດສັນຍາຊື້ເປັດ ກັບ **ຂ**. ຊຶ່ງ **ກ** ຢູ່ບ້ານ ສ, ເມືອງ ຊ ແຂວງ ຍ, ສ່ວນ ຂ ຢູ່ບ້ານ ຫ, ເມືອງ ອ, ແຂວງ ຣ. ໃນເນື້ອໃນສັນຍາຊື້ຂາຍນີ້ວັດຖຸປະສົງແມ່ນຊື້ຂາຍເປັດກີກ (ເປັດເທບ)ໃນລາຄາກິໂລກຣາມ 20,000 ກີບ, ເອົາເປັດທີ່ມີນ້ຳໜັກ 2 ກິໂລກຣາມຂຶ້ນໄປ, ໄລຍະ ຫົກເດືອນ **ຂ** ຕ້ອງສົ່ງເປັດໃຫ້ **ກ** ໜຶ່ງຄັ້ງ ແລະ ຄັ້ງໜຶ່ງບໍ່ໃຫ້ຫຼຸດ 10 ໂຕ່ນ. ສັນຍາຊື້ຂາຍເປັດລະ ຫວ່າງ **ກ** ແລະ **ຂ** ມີກຳນົດເວລາ ຫ້າປີ, ການຊຳລະແມ່ນ **ກ** ຕ້ອງຈ່າຍໃຫ້ **ຂ** ໃນມື້ທີ່ **ຂ** ນຳສົ່ງເປັດມາໃຫ້ **ກ**. ໃນກໍລະນີຫາກມີການຊັກຊ້າ ຫຼື ຕິດພາລະກິດໃດໜຶ່ງໃນການຊຳລະ ຫຼື ຂົນສົ່ງເປັດນັ້ນ ແມ່ນໃຫ້ **ກ** ແລະ **ຂ** ຕ້ອງແຈ້ງໃຫ້ແກ່ກັນຊາບຢ່າງໜ້ອຍ 3-5 ມື້ກ່ອນມື້ຂົນສົ່ງ ຫຼື ຈ່ າຍເງິນ. ໃນກໍລະນີຫາກບໍ່ມີການແຈ້ງກ່ອນລ່ວງໜ້າຫາກເກີດມີຄວາມເສຍຫາຍແມ່ນຝ່າຍທີ່ບໍ່ແຈ້ງນັ້ນຕ້ອງຮັບຜິດຊອບຕໍ່ຄວາມເສຍຫາຍທີ່ເກີດຂຶ້ນນັ້ນ. ໃນກໍລະນີທີ່ຕົກລົງກັນບໍ່ໄດ້ແມ່ນສະເໜີຫາສານພິຈາລະນາຕາມລະບຽບກົດໝາຍ. ສັນຍາຊື້ຂາຍເປັດນີ້ຈະສິ້ນສຸດເມື່ອຄົບກຳນົດເວລາ ຫ້າປີ ຫຼື ໝົດກ່ອນກຳນົດເວລາຖ້າ

	ຫາກມີການຍົກເລີກສັນຍາຊື້ຂາຍລະຫວ່າງ **ກ** ແລະ **ຂ.** ໝາຍຄວາມວ່າຈະປ່ຽນແປງໄດ້ກໍຕໍ່ເມື່ອ **ກ** ແລະ **ຂ** ເຫັນດີເຫັນພ້ອມນຳກັນ.
ເຫດຜົນໃນການປັບປຸງ	ມາດຕານີ້ໄດ້ປັບປຸງມາຈາກ ມາດຕາ 16 ເນື້ອໃນຂອງສັນຍາ ຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ປີ 2008, ຊຶ່ງໄດ້ເພີ່ມເນື້ອໃນກ່ຽວກັບ ວັນ, ເວລາ, ສະຖານທີ່ເຮັດສັນຍາ ເພື່ອໃຫ້ເນື້ອໃນສັນຍາຄົບຖ້ວນ ແລະ ສະດວກໃນການນຳໃຊ້. ສຳລັບເນື້ອໃນວັກສຸດທ້າຍຂອງມາດຕາ 16 ບໍ່ໄດ້ຍົກມາເປັນເນື້ອໃນຂອງມາດຕາ 370 ແມ່ນຍ້ອນວ່າເນື້ອໃນຕົ້ນຕໍຂອງມາດຕານີ້ມີຄວາມສົມບູນແລ້ວ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 398 ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2015.
ມາດຕາອ້າງອີງ	ມາດຕາ 18 ແລະ 379 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 371 ການສະເໜີ ແລະ ການຕອບຮັບສັນຍາ

ໃນສັນຍາທາງປາກເປົ່າ ທີ່ຝ່າຍສະເໜີບໍ່ໄດ້ກຳນົດເວລາໃຫ້ຕອບຮັບນັ້ນ ເມື່ອຝ່າຍຖືກສະເໜີໄດ້ຮັບຄຳສະເໜີໃນເວລາໃດ, ຢູ່ບ່ອນໃດກໍສາມາດຕອບຮັບໃນເວລານັ້ນ, ຢູ່ບ່ອນນັ້ນໄດ້ ແລະ ກໍໃຫ້ຖືວ່າສັນຍານັ້ນ ໄດ້ມີການຕົກລົງກັນນັບແຕ່ເວລານັ້ນເປັນຕົ້ນໄປ.

ໃນສັນຍາເປັນລາຍລັກອັກສອນ ທີ່ຝ່າຍສະເໜີບໍ່ໄດ້ກຳນົດເວລາໃຫ້ຕອບຮັບນັ້ນ ຝ່າຍທີ່ໄດ້ຮັບຄຳສະເໜີ ຕ້ອງສົ່ງຄຳຕອບເຖິງຝ່າຍສະເໜີພາຍໃນເວລາ ສິບຫ້າວັນ ນັບແຕ່ເວລາໄດ້ຮັບຄຳສະເໜີ ເປັນຕົ້ນໄປ ແລະ ຝ່າຍສະເໜີກໍຈະບໍ່ມີສິດຖອນຄຳສະເໜີຂອງຕົນພາຍໃນເວລາດັ່ງກ່າວ.

ຖ້າຝ່າຍສະເໜີ ຫາກໄດ້ວາງກຳນົດເວລາໃຫ້ຕອບຮັບແລ້ວ ກໍຈະຖືວ່າໄດ້ມີການຕົກລົງກັນ ນັບແຕ່ເວລາຄຳຕອບຮັບນັ້ນໄດ້ມາເຖິງຝ່າຍສະເໜີພາຍໃນກຳນົດເວລາ ແລະ ພາຍໃນກຳນົດເວລາດັ່ງກ່າວ ຝ່າຍສະເໜີກໍບໍ່ມີສິດຖອນຕົວໄດ້.

ຖ້າຄຳຕອບຮັບນັ້ນ ຫາກເຮັດຂຶ້ນພາຍໃນກຳນົດເວລາທີ່ສະເໜີ ຫຼື ຕາມກຳນົດເວລາຂອງວັກທີສອງ ຂອງມາດຕານີ້ ແຕ່ຄຳຕອບຮັບພັດໄດ້ມາເຖິງຝ່າຍສະເໜີຊ້າກວ່າກຳນົດເວລາດັ່ງກ່າວ ຖ້າຝ່າຍສະເໜີ ຫາກຮັບເອົາກໍໃຫ້ຖືວ່າສັນຍານັ້ນໄດ້ມີການຕົກລົງກັນ.

ຖ້າຄຳຕອບຮັບນັ້ນ ຫາກມີຂໍ້ຄວາມ ເພີ່ມເຕີມ, ຕັດອອກ ຫຼື ປ່ຽນແປງ ເມື່ອຝ່າຍສະເໜີເບື້ອງຕົ້ນ ຫາກຕອບຮັບເຫັນດີນຳ ກໍໃຫ້ຖືວ່າສັນຍານັ້ນ ໄດ້ມີການຕົກລົງກັນ.

ຈຸດປະສົງ	ເພື່ອກຳນົດກ່ຽວກັບເງື່ອນໄຂໃນການເປັນສັນຍາຕາມການສະເໜີ ແລະ ການຕອບຮັບ ພ້ອມທັງກຳນົດກ່ຽວກັບເວລາທີ່ເກີດເປັນສັນຍາ.
ຕົວຢ່າງ	**1. ກ** ລົມໂທລະສັບກັບ **ຂ** ວ່າຕ້ອງການຂາຍຊິມເນັດໃນມູນຄ່າ 100,000 ກີບຕໍ່ 1 ຊິມ **ຂ** ເຫັນດີຮັບເອົາ. 2. ໃນວັນທີ 1 ມັງກອນ 2020 **ກ** ຂຽນອີເມວ ສົ່ງຫາ **ຂ**, ອີເມວຂຽນວ່າ: ຕ້ອງການຂາຍ ໂທລະສັບ ໃນລາຄາ 1,000,000 ກີບ. **ຂ** ສາມາດສົ່ງຄຳຕອບຮັບໃຫ້ **ກ** ນັບແຕ່ວັນທີ່ **ຂ** ໄດ້ຮັບອີເມວ ຈາກ **ກ** ເປັນຕົ້ນໄປ 15 ວັນ. ໃນກຳນົດເວລາດັ່ງກ່າວ **ກ** ບໍ່ມີສິດຍົກເລີກການສະເໜີຂອງຕົນ. **3. ກ** ຂຽນອີເມວ ສົ່ງຫາ **ຂ**, ອີເມວຂຽນວ່າ: ຕ້ອງການຂາຍ ບັດໂທລະສັບ ໃນຈຳນວນ 1,000,000 ກີບ ພາຍໃນກຳນົດເວລາ 7 ວັນ, ນັບແຕ່ວັນໄດ້ຂຽນອີເມວ ໃນກຳນົດເວລາດັ່ງກ່າວ **ກ** ບໍ່ມີສິດຍົກເລີກການສະເໜີຂອງຕົນ.

	4. ກ ຂຽນອີເມວ ສົ່ງຫາ **ຂ**, ອີເມວຂຽນວ່າ: ຕ້ອງການຂາຍບັດໂທລະສັບ ໃນຈຳນວນ 1,000,000 ກີບ ພາຍໃນກຳນົດເວລາ 7 ວັນ ແຕ່ວັນທີ 1-7 ພຶດສະພາ 2017, ມາຮອດວັນທີ 9 ພຶດສະພາ 2017 **ຂ** ຕອບຮັບວ່າ ຕ້ອງການຊື້ບັດດັ່ງກ່າວ, ຖ້າວ່າ **ກ** ເຫັນດີຮັບເອົາກໍຖືວ່າສັນຍານັ້ນໄດ້ມີການຕົກລົງເຫັນດີນຳກັນ. **5. ກ** ຂຽນອີເມວ ສົ່ງຫາ **ຂ,** ອີເມວຂຽນວ່າ: ຕ້ອງການຂາຍ ບັດໂທລະສັບ ໃນຈຳນວນ 1,000,000 ກີບ ພາຍໃນກຳນົດເວລາ 7 ວັນ, ນັບແຕ່ວັນໄດ້ຂຽນອີເມວ ໃນກຳນົດເວລາດັ່ງກ່າວ **ກ** ບໍ່ມີສິດຍົກເລີກການສະເໜີຂອງຕົນ, ຕໍ່ມາ **ຂ** ຕ້ອງການຊື້ບັດໂທລະສັບເພີ່ມ ເປັນຈຳນວນ 2,000,000 ກີບ ຊຶ່ງ **ຂ** ໄດ້ ຂຽນອີເມວ ສົ່ງກັບໃຫ້ **ກ** ເມື່ອ **ກ** ເຫັນດີຮັບເອົາກໍຖືວ່າສັນຍາໄດ້ມີການຕົກລົງເຫັນດີນຳກັນ, ຖ້າວ່າ **ກ** ຫາກບໍ່ເຫັນດີ ແມ່ນໃຫ້ອີງໃສ່ ການຕົກລົງໃນເບື້ອງຕົ້ນ.
ເຫດຜົນໃນການປັບປຸງ	ມາດຕານີ້ໄດ້ປັບປຸງມາຈາກມາດຕາ 17 ການສະເໜີ ແລະ ການຮັບຕອບສັນຍາ ຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ປີ 2008, ຊຶ່ງໄດ້ປັບປຸງກຳນົດເວລາ ຈາກ ສາມສິບວັນ ມາເປັນ ສິບຫ້າວັນ ເພື່ອໃຫ້ກຳນົດເວລາ ໃນການຕອບຮັບເໝາະສົມກັບສະພາບຕົວຈິງ ແລະ ບໍ່ໃຊ້ເວລາຫຼາຍ, ພ້ອມນີ້ກໍ່ໄດ້ເພີ່ມເຕີມຂໍ້ຫ້າມບໍ່ໃຫ້ຝ່າຍສະເໜີຖອນຄຳສະເໜີພາຍໃນກຳນົດເວລາສິບຫ້າວັນ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 523 ແລະ 524 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ; ມາດຕາ 386,393 ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2015.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 372 ການສະເໜີໃຫ້ລາງວັນ

ບຸກຄົນທີ່ສະເໜີໃຫ້ລາງວັນ ຢ່າງເປັນລາຍລັກອັກສອນ ຫຼື ທາງປາກເປົ່າ ດ້ວຍການໂຄສະນາ, ການແຈ້ງ ຫຼື ດ້ວຍວິທີການອື່ນ ທີ່ຖືກຕ້ອງຕາມກົດໝາຍມີພັນທະໃຫ້ລາງວັນ ແກ່ບຸກຄົນທີ່ໄດ້ປະຕິບັດ ສຳເລັດ ຕາມທີ່ຕົນສະເໜີ.

ບຸກຄົນທີ່ສະເໜີໃຫ້ລາງວັນໂດຍບໍ່ມີກຳນົດເວລາ ມີສິດຖອນການສະເໜີຂອງຕົນ ຕາມຮູບການ ທີ່ຕົນໄດ້ສະເໜີ ກ່ອນບຸກຄົນໃດໜຶ່ງຈະໄດ້ປະຕິບັດສຳເລັດຕາມທີ່ໄດ້ສະເໜີ.

ການສະເໜີໃຫ້ລາງວັນທີ່ມີກຳນົດເວລາ ບໍ່ອະນຸຍາດໃຫ້ຖອນ ກ່ອນກຳນົດເວລາ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ກ່ຽວກັບ ພັນທະຂອງຜູ້ທີ່ສະເໜີໃຫ້ລາງວັນ ຕ້ອງຮັບຜິດຊອບ ໃນສິ່ງທີ່ຕົນໄດ້ສະເໜີອອກໄປເມື່ອບຸກຄົນອື່ນໄດ້ເຮັດສຳເລັດຕາມການສະເໜີ ນັ້ນ. ການສະເໜີໃຫ້ລາງວັນ ທີ່ບໍ່ມີກຳນົດເວລາ ແມ່ນສາມາດຖອນໄດ້, ແຕ່ກົງກັນຂ້າມ ຖ້າມີກຳນົດເວລາ ແມ່ນບໍ່ມີສິດຖອນກ່ອນກຳນົດເວລາ.
ຕົວຢ່າງ	1. ບໍລິສັດ **ກ** ສະເໜີໃຫ້ລາງວັນແກ່ລູກຄ້າທີ່ຊຸດບັດຕື່ມເງິນໂທລະສັບ ໃນເງື່ອນໄຂທີ່ວ່າ ຊຸດປັບໄດ້ພົບເຫັນລາງວັນໃດໄດ້ລາງວັນນັ້ນເຊັ່ນ ລົດຍົນ, ຕູ້ເຢັນ, ໂທລະສັບໃນວັນທີ 10 ພຶດສະພາ 2017 **ຂ** ໄດ້ຊຸດເຫັນລາງວັນ ຕູ້ເຢັນ, ບໍລິສັດ **ກ** ມີພັນທະມອບລາງວັນດັ່ງກ່າວໃຫ້ **ຂ**. 2. ຮ້ານສະດວກຊື້ **ຈ** ສະເໜີໃຫ້ລາງວັນແກ່ລູກຄ້າທີ່ຈົກສະຫຼາກໄດ້ລາງວັນ, ຊຶ່ງເລີ່ມແຕ່ວັນທີ 1-31 ທັນວາ 2020. ໃນຊ່ວງໄລຍະເວລາທີ່ຮ້ານ ສະດວກຊື້ **ຈ** ໄດ້ກຳນົດໄວ້ນີ້ທາງຮ້ານບໍ່ມີສິດຖອນໄດ້.

	ສະນັ້ນ, ໃນວັນທີ 13 ທັນວາ 2020 **ກ** ຈົກໄດ້ສະຫຼາກທີ່ມີລາງວັນເປັນ ລົດຈັກ. ດັ່ງນັ້ນຮ້ານສະດວກຊື້ **ຈ** ຈຶ່ງມີພັນທະມອບລາງວັນດັ່ງກ່າວເປັນ ລົດຈັກໃຫ້ **ກ**. ໃນກໍລະນີ ການສະເໜີໃຫ້ລາງວັນດັ່ງຕົວຢ່າງຂ້າງເທິງນັ້ນ ຫາກບໍ່ໄດ້ກຳນົດເວລາ ໃນເງື່ອນໄຂການມອບນັ້ນ ບໍລິສັດມີສິດຍົກເລີກ ຫຼື ຖອນການສະເໜີລາງວັນນັ້ນໄດ້ກ່ອນບຸກຄົນໃດໜຶ່ງຈະຊູດເຫັນລາງວັນດັ່ງ ກ່າວ. ແຕ່ຫາກວ່າ ໄດ້ກຳນົດເວລາໄວ້ໃນເງື່ອນໄຂຂອງການມອບລາງວັນ ແລ້ວ ບໍລິສັດທີ່ສະເໜີ ບໍ່ມີສິດຖອນການສະເໜີລາງວັນກ່ອນກຳນົດເວລາ ນັ້ນໄດ້ແຕ່ຢ່າງໃດ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງຂຶ້ນໃໝ່ ເພື່ອຢັ້ງຢືນໃຫ້ມີຜົນສັກສິດໃນການໃຫ້ລາງວັນ ຍ້ອນວ່າ ສັງຄົມປັດຈຸບັນ ບັນຫາດັ່ງກ່າວເກີດຂຶ້ນຫຼາຍ ແຕ່ຍັງບໍທັນມີຂໍ້ກຳນົດກົດໝາຍ ຄຸ້ມຄອງບັນຫານີ້. ເພື່ອຫຼີກລ້ຽງບັນຫາ ອັນໄດ້ສ້າງຄວາມອັບປະໂຫຍດໃຫ້ແກ່ອີກຝ່າຍ ທີ່ເກີດຂຶ້ນ ໃນສັງຄົມປັດຈຸບັນ.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງຂອງປະເທດອື່ນ	ມາດຕາ 362, 363 ແລະ 364 ຂອງປະມວນກົດໝາຍແພ່ງ ແລະ ພານິດໄທ; ມາດຕາ 529, 530 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 373 ການສະເໜີຊິງລາງວັນ

ການສະເໜີຊິງລາງວັນ ແມ່ນ ການໂຄສະນາ, ການແຈ້ງ ຫຼື ການໃຊ້ວິທີການອື່ນທີ່ຖືກຕ້ອງຕາມ ກົດໝາຍ ໃນການໃຫ້ລາງວັນແກ່ຜູ້ຊະນະການແຂ່ງຂັນກ່ຽວກັບກິດຈະກຳ ຫຼື ວຽກງານໃດໜຶ່ງຕາມການ ຕັດສິນ ຂອງຄະນະກຳມະການ ຫຼື ຂອງຜູ້ສະເໜີໃຫ້ລາງວັນເອງ.

ການສະເໜີຊິງລາງວັນ ຕ້ອງບົ່ງບອກກຳນົດເວລາ ແລະ ບໍ່ອະນຸຍາດໃຫ້ຖອນ ພາຍໃນກຳນົດເວ ລາດັ່ງກ່າວ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ກ່ຽວກັບ ການສະເໜີຊິງລາງວັນຊຶ່ງຕ້ອງກຳນົດເວລາ ແລະ ບໍ່ ສາມາດຖອນໄດ້ໃນກຳນົດເວລາທີ່ໄດ້ສະເໜີ.
ຕົວຢ່າງ	ໃນວັນທີ 1 ທັນວາ 2016 ບໍລິສັດ **ກ** ໄດ້ປະກາດກ່ຽວກັບການແຂ່ງຂັນແຕ້ມ ຮູບສັນຍາລັກໃດໜຶ່ງປະຈຳປີ 2017 ຊຶ່ງເລີ່ມຮັບສະໝັກແຕ່ວັນທີ 1-31 ທັນວາ 2016, ສ່ວນມື້ແຂ່ງຂັນແມ່ນວັນທີ 1 ມັງກອນ 2017. ການໃຫ້ລາງວັນ ແກ່ຜູ້ຊະນະເລີດລາງວັນທີ 1 ຈະໄດ້ຮັບເງິນສົດ ຈຳນວນ 20,000,000 ກີບ ຊຶ່ງມີຜູ້ເຂົ້າແຂ່ງຂັນຈຳນວນ 50 ຄົນ, ໃນຮອບຊິງຊະນະເລີດ **ຍ** ໄດ້ຊະນະໃຈ ຄະນະກຳມະການຕັດສິນ ໂດຍມອບລາງວັນທີ 1 ໃຫ້ໃນຕຳແໜ່ງ ແຕ້ມງາມ ແລະ ມີໃຈຄວາມໃນຮູບແຕ້ມ ຊຶ່ງຈະໄດ້ຮັບເງິນສົດຈຳນວນດັ່ງກ່າວ ພາຍໃນ ກຳນົດເວລາ 7 ວັນ ພາຍຫຼັງ ສຳເລັດຜົນການປະກວດແຂ່ງຂັນ. ໃນການສະເໜີຊິງລາງວັນດັ່ງຕົວຢ່າງຂ້າງເທິງນັ້ນ ບໍລິສັດ **ກ** ບໍ່ມີສິດຖອນການ ສະເໜີຊິງລາງວັນນັ້ນໄດ້ ນັບແຕ່ວັນ 1 - 31 ທັນວາ 2016 ແລະ ບໍລິສັດ **ກ** ຕ້ອງມອບລາງວັນໃຫ້ **ຍ** ພາຍໃນກຳນົດເວລາ 7 ວັນ ຄືວັນທີ 1 - 7 ມັງກອນ 2017.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງຂຶ້ນໃໝ່ ເພື່ອຢັ້ງຢືນໃຫ້ມີຜົນສັກສິດໃນການຊິງລາງວັນ ຍ້ອນວ່າ ສັງຄົມປັດຈຸບັນ ບັນຫາດັ່ງກ່າວເກີດຂຶ້ນຫຼາຍ ແຕ່ຍັງບໍທັນມີຂໍ້ກຳນົດກົດໝາຍ ຄຸ້ມຄອງບັນຫານີ້.

ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 365 ຂອງປະມວນກົດໝາຍແພ່ງ ແລະ ພານິດໄທ; ມາດຕາ 532 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 374 ການຕີຄວາມໝາຍຂອງສັນຍາ

ຖ້າຄູ່ສັນຍາ ຫາກມີຂໍ້ຂັດແຍ່ງກ່ຽວກັບເນື້ອໃນຂອງສັນຍາ ໃຫ້ຄູ່ສັນຍາ ຫຼື ສານຕີຄວາມໝາຍ ຂອງສັນຍາ ຕາມເຈດຕະນາຂອງຄູ່ສັນຍາ ຫຼື ຕາມປະເພນີປະຕິບັດທີ່ບໍ່ຂັດກັບກົດໝາຍ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ກ່ຽວກັບ ມາດຕະຖານຂອງການຕີຄວາມໝາຍ ກໍລະນີທີ່ຄູ່ສັນຍາ ຫາກເຂົ້າໃຈບໍ່ກົງກັນກ່ຽວກັບຂໍ້ກຳນົດຂອງສັນຍານັ້ນ.
ຕົວຢ່າງ	1. ໂຮງສີເຂົ້າ **ກ** ຕົກລົງຊື້ເຂົ້າຈ້າວຫອມມະລິ (ເຂົ້າເປືອກໃໝ່) ໃນຈຳນວນ 5 ເປົ້າ ນຳຊາວນາ **ຂ**, ໃນເວລາຕໍ່ມາ **ກ** ໄດ້ກວດພົບວ່າ ເຂົ້າຈ້າວທີ່ຊື້ມານັ້ນ ແມ່ນເຂົ້າຈ້າວຫອມມະລິ (ເຂົ້າເປືອກເກົ່າ) ບໍ່ແມ່ນເຂົ້າຈ້າວຫອມມະລິ (ເຂົ້າເປືອກໃໝ່) ດັ່ງທີ່ຕ້ອງການ, ຖ້າຫາກວ່າ **ກ** ຫາກທວງໃຫ້ **ຂ** ນຳເຂົ້າມາປ່ຽນໃຫ້ ແລະ **ຂ** ຕອບຮັບວ່າ ສາມາດປ່ຽນໄດ້ ແຕ່ຕ້ອງໄດ້ເພີ່ມເງິນ ຈຳນວນໜຶ່ງອີກ, ຖ້າ **ກ** ເຫັນດີ ກໍ່ຖືວ່າ ຕົກລົງກັນໄດ້, ແຕ່ຖ້າ **ກ** ຫາກ ວ່າ ອີງຕາມສັນຍາຊື້ຂາຍ ແມ່ນເປົ້າໝາຍຄືເຂົ້າຈ້າວຫອມມະລິ (ເຂົ້າເປືອກ ໃໝ່) ແລະ ບໍ່ເຫັນດີຈ່າຍເງິນເພີ່ມຕາມຄຳສະເໜີແລ້ວ, ຖ້າວ່າມີຂໍ້ຂັດແຍ່ງ ກັນໃນລັກສະນະນີ້ຄູ່ສັນຍາຕ້ອງປະຕິບັດຕາມເຈດຈຳນົງຂອງຄູ່ສັນຍາ ຫຼື ປະຕິບັດຕາມປະເພນີທີ່ເຄີຍປະຕິບັດກັນ. ສະນັ້ນ, ຖືວ່າ **ຂ** ລະເມີດສັນຍາ ຊື້ຂາຍເຂົ້າໃນຄັ້ງນີ້ ເນື່ອງຈາກເຂົ້າທີ່ຂາຍນັ້ນບໍ່ສອດ ຄ່ອງກັບເຈດຈຳນົງທີ່ ຕົກລົງກັນໃນເບື້ອງຕົ້ນ. 2. **ກ** ຊື້ໄຂ່ນຳຟາມໄກ່ລາດ **ຂ** ເພື່ອຈະເອົາມາໃສ່ຕູ້ຟັກ ຊຶ່ງຕົກລົງຊື້ຈຳນວນ 10.000 ໜ່ວຍ, ໃນລາຄາໜ່ວຍລະ 1.000 ກີບ ແຕ່ **ຂ** ກໍສົ່ງມາຕາມ ຈຳນວນທີ່ໄດ້ຕົກລົງກັນ ແຕ່ຫາກແມ່ນໄຂ່ໄກ່ພັນ. ຊຶ່ງເຮັດໃຫ້ **ກ** ບໍ່ເຫັນດີ ຮັບເອົາ ແລະ ຈ່າຍເງິນຄ່າໄຂ່ຈຳນວນດັ່ງກ່າວໃຫ້ແກ່ **ຂ**.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງຂຶ້ນໃໝ່ ເພື່ອແນະນຳສຳລັບຂໍ້ຂັດແຍ່ງກ່ຽວກັບເນື້ອໃນຂອງສັນຍາ ທີ່ເກີດຂຶ້ນລະຫວ່າງຄູ່ສັນຍາທີ່ບໍ່ສາມາດຕົກລົງກັນໄດ້ນັ້ນ ແມ່ນມີແຕ່ສານເທົ່າ ນັ້ນ ທີ່ຈະຕີຄວາມໝາຍໄດ້.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 368 ຂອງປະມວນກົດໝາຍແພ່ງ ແລະ ພານິດໄທ (ສັນຍານັ້ນທ່ານ ໃຫ້ຕີຄວາມໄປຕາມຄວາມປະສົງໃນທາງສຸດຈະລິດໂດຍວິເຄາະເຖິງປົກກະຕິ ປະເພນີ).
ມາດຕາອ້າງອີງ	ມາດຕາ 6 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 375 ຜົນຂອງສັນຍາ

ສັນຍາ ມີຜົນບັງຄັບຕໍ່ຄູ່ສັນຍາເທົ່ານັ້ນ ຕາມເນື້ອໃນທີ່ໄດ້ຕົກລົງກັນ.

ນອກຈາກນີ້, ສັນຍາຕ້ອງປະຕິບັດຕາມກົດໝາຍ, ຫຼັກຍຸຕິທຳ ແລະ ປະເພນີປະຕິບັດ ໂດຍອີງ ຕາມຄຸນລັກສະນະຂອງແຕ່ລະປະເພດສັນຍາ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ກ່ຽວກັບສັນຍາມີຜົນບັງຄັບ ຕາມການຕົກລົງກັນຂອງຄູ່ສັນຍາ. ຄູ່ສັນຍາບໍ່ສາມາດປະຕິເສດຕໍ່ສິ່ງນັ້ນໄດ້. ພ້ອມກັນນັ້ນ, ກໍຍັງໃຫ້ເຫັນຢ່າງຈະແจ້ງວ່າຜົນບັງຄັບດັ່ງກ່າວຖືກກຳນົດຂຶ້ນຕາມຫຼັກຍຸຕິທຳ, ປະເພນີປະຕິບັດ ແລະ ກົດໝາຍ.
ຕົວຢ່າງ	**1. ກ** ເຮັດສັນຍາຊື້ຂາຍໂທລະທັດນຳ **ຂ** ເປັນເງິນຈຳນວນ 1,500,000 ກີບ, ຫຼັງຈາກເຮັດສັນຍາກັນແລ້ວ **ກ** ມີພັນທະມອບໂທລະທັດໃຫ້ **ຂ, ຂ** ຕ້ອງໄດ້ຈ່າຍເງິນໃຫ້ **ກ**. **2.** ໃນວັນທີ 1 ສິງຫາ 2019 **ກ** ຕົກລົງເຮັດສັນຍາຊື້ສາລີນຳ **ຂ** ຈຳນວນ 10 ໂຕ່ນ, ລາຄາໂຕ່ນລະ 2.000.000 ກີບ ແຕ່ເນື່ອງຈາກວ່າຊ່ວງໄລຍະເວລາເຮັດສັນຍານັ້ນສາລີຍັງບໍ່ທັນແກ່ແຫ້ງທັງສອງຈຶ່ງຕົກລົງກັນວ່າ **ຂ** ຕ້ອງສົ່ງສາລີແກ່ແຫ້ງໃຫ້ **ກ** ໃນວັນທີ 1 ພະຈິກ 2019 ແລະ **ກ** ເອງຈະຊຳລະເງິນໃຫ້ **ຂ** ໃນມື້ມອບສາລີຖືວ່າຜົນຂອງສັນຍາຊື້ຂາຍສາລີລະຫວ່າງ **ກ** ແລະ **ຂ** ນັ້ນແມ່ນເລີ່ມແຕ່ວັນທີ 1 ເດືອນ ສິງຫາ ໄປຫາ ວັນທີ 1 ພະຈິກ 2019, **ຂ** ຕ້ອງສົ່ງສາລີແກ່ແຫ້ງໃຫ້ **ກ** ຈຳນວນ 10 ໂຕ່ນ ແລະ **ກ** ຕ້ອງຈ່າຍເງິນຈຳນວນ 20.000.000 ກີບ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງຂຶ້ນໃໝ່ ເພື່ອເຮັດໃຫ້ຄູ່ສັນຍາມີສະຕິໃນການເຄົາລົບສິ່ງທີ່ຕົກລົງກັນໄວ້ໃນສັນຍາ ໂດຍປະຕິບັດຕາມບັນດາຫຼັກການທາງປະເພນີ ແລະ ກົດໝາຍ ໂດຍອີງໃສ່ຈຸດພິເສດຂອງແຕ່ລະສັນຍາ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 1134 ແລະ 1135 ຂອງປະມວນກົດໝາຍແພ່ງຝຣັ່ງ.
ມາດຕາອ້າງອີງ	ມາດຕາ 378 ແລະ 393 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ໝວດທີ 3
ສັນຍາເປັນໂມຄະ

ມາດຕາ 376 ສັນຍາເປັນໂມຄະ

ສັນຍາເປັນໂມຄະ ແມ່ນ ສັນຍາທີ່ເຮັດຂຶ້ນ ໂດຍບໍ່ຖືກຕ້ອງຕາມເງື່ອນໄຂຂອງສັນຍາ.

ສັນຍາ ອາດໂມຄະບໍ່ເດັດຂາດ ຫຼື ເດັດຂາດ, ໂມຄະທັງໝົດ ຫຼື ບາງສ່ວນ.

ການຢັ້ງຢືນຄວາມເປັນໂມຄະເດັດຂາດຂອງສັນຍາ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນມາດຕາ 26 ຂອງປະມວນກົດໝາຍສະບັບນີ້.

ສ່ວນການຂໍລົບລ້າງ ສັນຍາເປັນໂມຄະບໍ່ເດັດຂາດນັ້ນ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນມາດຕາ 27 ຂອງປະມວນກົດໝາຍສະບັບນີ້.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ກ່ຽວກັບ ຄວາມໝາຍຂອງສັນຍາເປັນໂມຄະ, ປະເພດຂອງສັນຍາເປັນໂມຄະ ແລະ ວິທີການປະຕິບັດກ່ຽວກັບສັນຍາທີ່ເປັນໂມຄະ.
ຕົວຢ່າງ	**ຕົວຢ່າງ:** ສັນຍາເປັນໂມຄະ ແມ່ນປະຕິບັດຄືກັນກັບ ນິຕິກຳເປັນໂມຄະ ຕາມມາດຕາ 22-27 ຂອງປະມວນກົດໝາຍແພ່ງ.

ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກມາດຕາ 18 ວັກ 3 ສັນຍາທີ່ເປັນໂມຄະ ຂອງກົດໝາຍ ວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ປີ 2008, ໂດຍເພີ່ມ ສອງວັກ ສຸດທ້າຍເຂົ້າ ເນື່ອງຈາກว่า ผ่านมาบันหาຢູ່ໃນສອງວັກສຸກທ້າຍນີ້ຍັງບໍ່ທັນໄດ້ ກຳນົດ ສະນັ້ນ ຈຶ່ງກຳນົດເພື່ອໃຫ້ສອດຄ່ອງກັບໝວດທີ 3 ນິຕິກຳ ໃນພາກບົດ ບັນຍັດທົ່ວໄປ ຂອງປະມວນກົດໝາຍແພ່ງ.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 22 - 28 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 377 ຜົນສະທ້ອນຂອງສັນຍາເປັນໂມຄະ

ເມື່ອຮັບຮູ້ວ່າ ສັນຍາເປັນໂມຄະແລ້ວ ໃຫ້ປະຕິບັດ ດັ່ງນີ້:

1. ຜົນຂອງສັນຍາເປັນໂມຄະ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນມາດຕາ 28 ຂອງປະມວນ ກົດໝາຍສະບັບນີ້;

2. ໃນກໍລະນີທີ່ສັນຍາ ຫາກໄດ້ເຮັດຂຶ້ນໂດຍຝ່າຍໜຶ່ງໄດ້ຮັບຄວາມອັບປະໂຫຍດ ໃຫ້ສົ່ງຊັບ ສິ່ງຂອງທີ່ໄດ້ປະຕິບັດຕໍ່ກັນແລ້ວນັ້ນ ຄືນແກ່ກັນ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ກ່ຽວກັບຜົນທາງດ້ານກົດໝາຍຂອງສັນຍາເປັນໂມຄະ.
ຕົວຢ່າງ	**1. ກ** ອາຍຸ 15 ປີ ເຮັດສັນຍາຊື້-ຂາຍລົດຈັກ ໃຫ້ **ຂ** ອາຍຸ 20 ປີ, ລົດຈັກມືສອງ ຕາມລາຄາທ້ອງຕະຫຼາດແມ່ນ 10.000.000 ກີບ ແຕ່ **ຂ** ຕ້ອງການ ຊື້ໃນລາຄາ 5.000.000 ກີບ ເທົ່ານັ້ນ. **ກ** ຈຶ່ງຕົກລົງຂາຍໃຫ້ **ຂ**. ສັນຍາ ຊື້-ຂາຍສະບັບນີ້ເປັນສັນຍາທີ່ເຮັດ ກັບເດັກທີ່ບໍ່ພົ້ນກະສຽນອາຍຸ 18 ປີ ຊຶ່ງ ບໍ່ຖືກຕ້ອງກັບເງື່ອນໄຂຂອງສັນຍາ ຈຶ່ງເປັນໂມຄະ, ພາຍຫຼັງພໍ່ແມ່ ຂອງ **ກ** ຮູ້ຈຶ່ງຮຽກຮ້ອງໃຫ້ **ຂ** ສົ່ງລົດຄືນໃຫ້ກັບ **ກ** ພ້ອມດຽວກັນ **ກ** ກໍຈະສົ່ງເງິນ ຈຳນວນ 5.000.000 ກີບ ໃຫ້ **ຂ**. **2. ກ** ມີທີ່ດິນ 1 ຕອນ ເປັນທີ່ດິນທີ່ອຸດົມສົມບູນ ແລະ ຕັ້ງຢູ່ໃນເຂດທີ່ກຳລັງ ພັດທະນາເສດຖະກິດ ເມື່ອ **ຂ** ນັກທຸລະກິດ ຮູ້ຂ່າວ ຈຶ່ງຕ້ອງການທີ່ດິນ ຕອນນັ້ນ ເພື່ອຈະດຳເນີນທຸລະກິດ ຈຶ່ງໄດ້ໄປຂໍຊື້ສິດນຳໃຊ້ທີ່ດິນນຳ **ກ**, ແຕ່ **ກ** ບໍ່ຍິນດີຂາຍ, **ຂ** ຈຶ່ງໃຫ້ລູກນ້ອງມາຂົ່ມຂູ່ ຈະທຳຮ້າຍ **ກ** ຈົນເຮັດໃຫ້ **ກ** ຕ້ອງຍອມຂາຍສິດນຳໃຊ້ທີ່ດິນ ຕອນດັ່ງກ່າວ ໃນຈຳນວນ 200.000.000 ກີບ, ຕໍ່ມາ **ກ** ໄດ້ໄປຮ້ອງຂໍລົບລ້າງສັນຍາ, ເມື່ອສັນຍາຖືກລົບລ້າງຕາມຄຳ ຕັດສິນຂອງສານ **ຂ** ຕ້ອງສົ່ງທີ່ດິນຕອນດັ່ງກ່າວໃຫ້ **ກ** ແລະ ເງິນ ຈຳນວນ 200.000.000 ກີບ ຮິບເປັນຂອງລັດ ຕາມມາດຕາ 28 ວັກ 2 ຂອງ ປະມວນກົດໝາຍແພ່ງ. 3. ຜົນທາງດ້ານກົດໝາຍຂອງສັນຍາເປັນໂມຄະໃຫ້ເບິ່ງຢູ່ໃນຕົວຢ່າງຂອງ ມາດ ຕາ 28 ຂອງປະມວນກົດໝາຍແພ່ງ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 23 ຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ສະບັບ ປີ 2008, ມີການປັບປຸງໃຫ້ມີຄວາມກະທັດຮັດເຂົ້າ ໃຈງ່າຍ ແລະ ສອດຄ່ອງກັບຫຼັກການກ່ຽວກັບຜົນສະທ້ອນຂອງການເຮັດນິຕິກຳ ຕາມທີ່ໄດ້ກຳນົດໄວໃນມາດຕາ 28 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງຂອງປະເທດອື່ນ	ມາດຕາ 121/2 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.

ມາດຕາອ້າງອີງ	ມາດຕາ 24, 28 ແລະ 367 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ໝວດທີ 4
ການປະຕິບັດສັນຍາ

ມາດຕາ 378 ການປະຕິບັດສັນຍາ

ຄູ່ສັນຍາ ຕ້ອງປະຕິບັດສັນຍາດ້ວຍຄວາມຈິງໃຈ, ຄົບຖ້ວນ, ຕາມກຳນົດເວລາ ແລະ ໃນສະຖານທີ່ ຊຶ່ງໄດ້ກຳນົດໄວ້ໃນ ສັນຍາ ຫຼື ກົດໝາຍ.

ຄູ່ສັນຍາ ບໍ່ມີສິດປະຕິເສດການປະຕິບັດສັນຍາ ຫຼື ປ່ຽນແປງເງື່ອນໄຂຂອງສັນຍາແຕ່ຝ່າຍດຽວ, ເວັ້ນເສຍແຕ່ກໍລະນີທີ່ກົດໝາຍຫາກໄດ້ອະນຸຍາດໃຫ້.

ຄູ່ສັນຍາ ມີສິດບໍ່ຮັບເອົາການປະຕິບັດທີ່ບໍ່ຄົບຖ້ວນ, ບໍ່ຖືກຕ້ອງ ແລະ ສອດຄ່ອງກັບ ສັນຍາ ຫຼື ກົດໝາຍ, ເວັ້ນເສຍແຕ່ ສັນຍາ ຫຼື ກົດໝາຍ ຫາກໄດ້ກຳນົດໄວ້ເປັນຢ່າງອື່ນ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ກ່ຽວກັບວິທີການປະຕິບັດສັນຍາຕໍ່ກັນຂອງຄູ່ສັນຍາ ແລະ ຜົນທາງດ້ານກົດ ໝາຍຂອງການປະຕິບັດທີ່ບໍ່ຖືກຕ້ອງສອດຄ່ອງຕາມສັນຍາ ຫຼື ຕາມກົດໝາຍ.
ຕົວຢ່າງ	ໃນວັນທີ 1 ຕຸລາ 2020 **ກ** ເຮັດສັນຍາຊື້ຂາຍ ແກ່ນກາເຟ ຄຸນນະພາບດີ (ເກດ1) ນຳສວນກາເຟຂອງ **ຂ** ຈຳນວນ 1 ໂຕນ ໃນລາຄາກິໂລກຼາມ ລະ 15.000 ກີບ, ຊຶ່ງ **ກ** ແລະ **ຂ** ໄດ້ ຕົກລົງຈະສົ່ງ ແກ່ນກາເຟ ເຄິ່ງໜຶ່ງກ່ອນໃນ ວັນທີ 30 ພະຈິກ 2020. 1. ພາຍຫຼັງເຮັດສັນຍາກັນແລ້ວ **ຂ** ໄດ້ສົ່ງແກ່ນກາເຟໃຫ້ **ກ** ແລະ **ກ** ໄດ້ຈ່າຍ ຄ່າແກ່ນກາເຟ ໃຫ້ **ຂ**. ກໍລະນີນີ້ **ກ** ແລະ **ຂ** ປະຕິບັດສັນຍາຕໍ່ກັນດ້ວຍ ຄວາມຈິງໃຈ, ຄົບຖ້ວນ, ຖືກຕາມກຳນົດເວລາທີ່ໄດ້ລະບຸໄວ້ໃນສັນຍາ. 2. ຈາກເຫດການຂ້າງເທິງ ພາຍຫຼັງທີ່ຕົກລົງເຮັດສັນຍາກັນແລ້ວ ມາຮອດ ວັນທີ 25 ພະຈິກ 2020 ລາຄາແກ່ນກາເຟຕາມທ້ອງຕະຫຼາດຫຼຸດລົງ ຈາກ ກິໂລກຼາມລະ 15.000 ກີບ ເປັນ 12.000 ກີບ, ເມື່ອມາຮອດວັນທີ 30 ພະຈິກ 2020 ມື້ນັດສົ່ງແກ່ນກາເຟ **ກ** ຈະປະຕິເສດບໍ່ເອົາແກ່ນກາເຟ ຈາກ **ຂ** ບໍ່ໄດ້. ໃນກໍລະນີທີ່ **ກ** ສັ່ງຊື້ ແກ່ນກາເຟ ຄຸນນະພາບດີ (ເກດ 1) ແຕ່ **ຂ** ໄດ້ ນຳສົ່ງ ແກ່ນກາເຟ (ເກດ 3) ລາຄາຖືກມາສົ່ງໃຫ້. ກໍລະນີນີ້ **ກ** ສາມາດ ປະຕິເສດບໍ່ຮັບເອົາແກ່ນກາເຟດັ່ງກ່າວໄດ້ ເນື່ອງຈາກ **ຂ** ປະຕິບັດສັນຍາ ບໍ່ມີຄຸນນະພາບ. **3.** **ຂ** ຂົນສົ່ງ ແກ່ນກະເຟໃຫ້ **ກ** ຊັກຊ້າຍ້ອນວ່າ **ຂ** ໄດ້ກິນເຫຼົ້າເມົາ ເຮັດໃຫ້ ຂັບລົດໄປແລ້ວເກີດອຸປະຕິເຫດ ພ້ອມທັງເຮັດໃຫ້ ແກ່ນກາເຟເສຍຫາຍ ແລະ ບໍ່ສາມາດນຳສົ່ງທັນຕາມກຳນົດເວລາໄດ້, ເປັນສາເຫດເຮັດໃຫ້ **ກ** ບໍ່ ສາມາດໄດ້ແກ່ນກາເຟມາຜະລິດຕາມທີ່ເປົ້າໝາຍທີ່ວາງໄວ້. ສະນັ້ນ **ກ** ມີ ສິດບໍ່ຮັບເອົາການປະຕິບັດສັນຍາດັ່ງກ່າວ. 4. ກໍລະນີ **ຂ** ຂົນສົ່ງແກ່ນກາເຟ ໃຫ້ **ກ** ຊັກຊ້າກາຍກຳນົດເວລາ 1 ອາທິດ ຍ້ອນ ພົບກັບໄພພິບັດນ້ຳຖ້ວມສູງເຮັດໃຫ້ລົດຂົນສົ່ງບໍ່ສາມາດເດີນທາງໄດ້ ແລະ **ຂ** ກໍໄດ້ແຈ້ງຂໍ້ຫຍຸ້ງຍາກນັ້ນໃຫ້ກັບ **ກ** ຊາບແລ້ວ. **ກ** ຕ້ອງໄດ້ຮັບ ເອົາການຂົນສົ່ງ ແກ່ນກາເຟຂອງ **ຂ** ແລະ ບໍ່ມີສິດປະຕິເສດການປະຕິບັດ ສັນຍານີ້ ເນື່ອງຈາກເປັນເຫດສຸດວິໄສ.

ເຫດຜົນໃນການຮັກສາເນື້ອໃນເດີມ	ມາດຕານີ້ຮັກສາເນື້ອໃນເດີມ ຂອງມາດຕາ 24 ການປະຕິບັດສັນຍາຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ສະບັບປີ 2008.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 380-382, 386 ແລະ 387 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 379 ການປະຕິບັດສັນຍາເພີ່ມເຕີມ

ໃນກໍລະນີທີ່ສັນຍາ ຫາກບໍ່ໄດ້ກຳນົດ ຫຼື ກຳນົດບໍ່ຈະແຈ້ງກ່ຽວກັບຄຸນນະພາບທີ່ຕ້ອງການນັ້ນ, ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍມາດຕະຖານ ຫຼື ກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ ຫຼື ມາດ ຕະ ຖານທີ່ຍອມຮັບເປັນປະເພນີເຄີຍປະຕິບັດກັນມາ ໂດຍສອດຄ່ອງກັບວັດຖຸປະສົງຂອງສັນຍາ.

ໃນກໍລະນີທີ່ສັນຍາ ຫາກກຳນົດລາຄາ ຫຼື ຄ່າຕອບແທນ ບໍ່ຈະແຈ້ງນັ້ນ ໃຫ້ປະຕິບັດຕາມລາຄາ ທົ່ວໄປໃນຕະຫຼາດຢູ່ສະຖານທີ່ເວລາປະຕິບັດສັນຍາ ຫຼື ຕາມລາຄາ ທີ່ລັດໄດ້ກຳນົດ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ກ່ຽວກັບ ການປົກປ້ອງສິດ ແລະ ຜົນປະໂຫຍດຂອງຄູ່ສັນຍາ ໃນເວລາທີ່ສັນຍາຫາກບໍ່ໄດ້ກຳນົດເນື້ອໃນຈະແຈ້ງ.
ຕົວຢ່າງ	**1. ກ** ໄດ້ເຮັດສັນຍາຊື້-ຂາຍ ເຫຼັກນຳ **ຂ** ຈຳນວນ 3 ໂຕນ ລວມເປັນເງິນທັງໝົດ 100.000.000 ກີບ ຊຶ່ງສັນຍາບໍ່ໄດ້ລະບຸກ່ຽວກັບຄຸນນະພາບ ແລະ ມາດຕະຖານຂອງເຫຼັກ. **ຂ** ເຫັນວ່າສັນຍາດັງກ່າວບໍ່ໄດ້ກຳນົດແຈ້ງ ກ່ຽວກັບ ຄຸນນະພາບ ແລະ ມາດຕະຖານຂອງເຫຼັກ, **ຂ** ຜູ້ຂາຍ ຈຶ່ງແຈ້ງໃຫ້ **ກ** ຊາບ ແລະ ຕົກລົງກັນກ່ຽວກັບ ຄຸນນະພາບ ແລະ ມາດຕະຖານຂອງ ເຫຼັກ ຕາມມາດຖານສາກົນ. ການປະຕິບັດເພີ່ມເຕີມຂອງ **ຂ** ນີ້ແມ່ນເຮັດ ໃຫ້ວັດຖຸປະສົງຂອງສັນຍາໄດ້ຮັບການປະຕິບັດທີ່ຖືກຕ້ອງ ແລະ ຄົບຖ້ວນ ຂຶ້ນຕາມວັກໜຶ່ງ ຂອງມາດຕາ 379. **2. ກ** ຢືມເຄື່ອງຈັກເຮືອຂອງ **ຂ** ນຳໄປໃສ່ເຮືອຂອງຕົນ ເພື່ອຂົນເຄື່ອງ ກຳນົດ ເວລາໃນການຢືມ 5 ວັນ ໃນສັນຍານັ້ນບໍ່ໄດ້ກຳນົດກ່ຽວກັບຄ່າຕອບແທນ, ເມື່ອຄົບກຳນົດເວລາ **ກ** ເອົາເຄື່ອງຈັກເຮືອມາສົ່ງ **ຂ**, **ກ** ຈຶ່ງໄດ້ຈ່າຍຄ່າ ຕອບແທນ ໃນການເຊົ່າເຄື່ອງຈັກເຮືອ ຕາມລາຄາທີ່ເຄີຍປະຕິບັດກັນມາໃນ ທ້ອງຖິ່ນນັ້ນ ຄືລາຄາ 50.000 ກີບ ຕໍ່ວັນ ລວມທັງໝົດ ເປັນ 250.000 ກີບ ຕາມວັກສອງ ຂອງມາດຕາ 379.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 25 ການປະຕິບັດສັນຍາເພີ່ມເຕີມ ຂອງ ກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ສະບັບ ປີ 2008, ໂດຍໄດ້ຈັດລຽງຄຳສັບຄືນ ໃຫ້ສອດຄ່ອງ ໂດຍປ່ຽນປະໂຫຍກທີ່ວ່າ: "**ລະບຽບ ກົດໝາຍອື່ນທີ່ກ່ຽວຂ້ອງ**" ມາເປັນ "**ກົດໝາຍ ຫຼື ລະບຽບການອື່ນ ທີ່ກ່ຽວຂ້ອງ**" ໃນວັກທີ 1; ແລະ ປະໂຫຍກທີ່ວ່າ: "**ໃຫ້ປະຕິບັດຢ່າງ ສອດຄ່ອງກັບລາຄາທົ່ວໄປໃນທ້ອງຕະຫຼາດ**" ມາເປັນ "**ໃຫ້ປະຕິບັດ ຕາມລາຄາທົ່ວໄປໃນຕະຫຼາດ**" ໃນວັກທີ 2 ເພື່ອໃຫ້ຈະແຈ້ງ, ຮັດກຸມ ແລະ ຊັດເຈນ ຂຶ້ນຕື່ມ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 370, 378, 380 ແລະ 382 ຂອງປະມວນກົດໝາຍແພ່ງ.

ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 380 ກຳນົດເວລາຂອງການປະຕິບັດສັນຍາ

ສັນຍາ ຕ້ອງໄດ້ຮັບການປະຕິບັດ ຕາມກຳນົດເວລາທີ່ໄດ້ກຳນົດໄວ້ ແລະ ໃຫ້ສອດຄ່ອງກັບກົດໝາຍ.

ໃນກໍລະນີທີ່ບໍ່ໄດ້ກຳນົດເວລາຂອງການປະຕິບັດສັນຍາ, ເຈົ້າໜີ້ ມີສິດທອງໃຫ້ປະຕິບັດ ແລະ ລູກໜີ້ ກໍມີສິດປະຕິບັດໄດ້ທຸກເວລາ. ໃນກໍລະນີທີ່ເຈົ້າໜີ້ ຫາກໄດ້ທອງໃຫ້ປະຕິບັດນັ້ນ ລູກໜີ້ ມີພັນທະປະຕິບັດສັນຍາດັ່ງກ່າວ ພາຍໃນເວລາ ສິບຫ້າວັນ ນັບແຕ່ວັນທີ່ເຈົ້າໜີ້ ໄດ້ທອງໃຫ້ປະຕິບັດ ເປັນຕົ້ນໄປ.

ລູກໜີ້ ອາດປະຕິບັດສັນຍາກ່ອນກຳນົດເວລາກໍໄດ້, ຖ້າການປະຕິບັດນັ້ນ ຫາກບໍ່ຂັດກັບສັນຍາ ຫຼື ກົດໝາຍ ແລະ ເຈົ້າໜີ້ ກໍເຫັນດີນຳ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ສິດ ແລະ ພັນທະຂອງຄູ່ສັນຍາໃນການປະຕິບັດ ຕາມກຳນົດເວລາທີ່ຕ້ອງປະຕິບັດສັນຍາ, ທັງກຳນົດໃຫ້ເຫັນຈະແຈ້ງ ກໍລະນີສັນຍາທີ່ບໍ່ໄດ້ກຳນົດເວລາປະຕິບັດສັນຍາ ແລະ ກໍລະນີສັນຍາທີ່ບໍ່ມີກຳນົດເວລາ.
ຕົວຢ່າງ	**1. ກ** ໄດ້ກູ້ຢືມເງິນນຳ **ຂ** ຕົ້ນທຶນ 30.000.000 ກີບ, ດອກເບ້ຍ 2% ຕໍ່ເດືອນ, ກຳນົດເວລາ ສາມເດືອນ, ເມື່ອຄົບກຳນົດເວລາ **ກ** ໄດ້ຊຳລະຕົ້ນທຶນ ແລະ ດອກເບ້ຍໃຫ້ **ຂ** ຄົບຕາມຈຳນວນ ຖືວ່າການປະຕິບັດສັນຍາໄດ້ສຳເລັດແລ້ວ ຕາມວັກໜຶ່ງຂອງມາດຕາ 380. 2. ໃນວັນທີ 1 ມັງກອນ 2021 **ກ** ເຮັດສັນຍາກູ້ຢືມເງິນນຳ **ຂ** ຕົ້ນທຶນ 30.000.000 ກີບ, ດອກເບ້ຍ 2% ຕໍ່ເດືອນ, ບໍ່ໄດ້ກຳນົດເວລາໃນການຊຳລະໜີ້ໄວ້ໃນສັນຍາ. ກໍລະນີນີ້ **ກ** ສາມາດຊຳລະຕົ້ນທຶນ ແລະ ດອກເບ້ຍໃຫ້ **ຂ** ເວລາໃດກໍໄດ້. ແຕ່ເວລາຜ່ານໄປ ສາມເດືອນ **ກ** ຍັງບໍ່ໄດ້ຊຳລະໜີ້ໃຫ້ **ຂ. ຂ** ຈຶ່ງທອງໃຫ້ **ກ** ປະຕິບັດການໃຊ້ໜີ້ສິນໃນວັນທີ 1 ເມສາ 2021, ພາຍຫຼັງທີ່ **ຂ** ໄດ້ທອງໃຫ້ **ກ** ປະຕິບັດພັນທະເປັນເວລາ 15 ວັນ (1 - 16 ເມສາ 2021) **ກ** ຕ້ອງຊຳລະໜີ້ທັງ ໝົດໃຫ້ກັບ **ຂ** ຕາມວັກສອງ ຂອງມາດຕາ 380. **3. ກ** ກູ້ຢືມເງິນນຳ **ຂ** ຕົ້ນທຶນ 30.000.000 ກີບ, ດອກເບ້ຍ 2% ຕໍ່ເດືອນ, ກຳນົດເວລາ ສາມເດືອນ, ມາຮອດເດືອນທີ 2 **ກ** ສາມາດທີ່ຈະຊຳລະໜີ້ທັງ ຕົ້ນທຶນ ແລະ ດອກເບ້ຍ ຄົບຕາມຈຳນວນ ຊຶ່ງໄດ້ຮັບການເຫັນດີຈາກ **ຂ** ຜູ້ເປັນເຈົ້າໜີ້ ຕາມວັກສາມຂອງມາດຕາ 380.
ເຫດຜົນໃນການຮັກສາເນື້ອໃນເດີມ	ມາດຕານີ້ຮັກສາເນື້ອໃນເດີມຂອງມາດຕາ 26 ການກຳນົດເວລາ ຂອງການປະຕິບັດສັນຍາ ກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ສະບັບ ປີ 2008. ເຈົ້າໜີ້ ໃນມາດຕານີ້ ໝາຍເຖິງຜູ້ທີ່ໄດ້ປະຕິບັດພັນທະຂອງຕົນແລ້ວ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 412 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 57, 378, 381 ແລະ 382 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະ ເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 381 ສະຖານທີ່ປະຕິບັດສັນຍາ

ສັນຍາ ໃຫ້ປະຕິບັດຢູ່ສະຖານທີ່ ຊຶ່ງສັນຍາ ຫຼື ກົດໝາຍໄດ້ກຳນົດໄວ້. ໃນກໍລະນີທີ່ບໍ່ໄດ້ກຳນົດສະຖານທີ່ປະຕິບັດ ໃຫ້ປະຕິບັດສັນຍາ ຢູ່ສະຖານທີ່ ດັ່ງນີ້:

1. ການມອບອາຄານກໍ່ສ້າງ ໃຫ້ປະຕິບັດຢູ່ສະຖານທີ່ການກໍ່ສ້າງນັ້ນ;

2. ການໃຊ້ແທນໜີ້ສິນ ໃຫ້ປະຕິບັດຢູ່ບ່ອນຢູ່ຂອງເຈົ້າໜີ້ ໃນເວລາເຮັດສັນຍານັ້ນ, ເວັ້ນເສຍແຕ່ການໃຊ້ແທນໜີ້ສິນຂອງການຈັດຕັ້ງຂອງ ລັດ, ລວມໝູ່ ແລະ ສັງຄົມ; ຖ້າເຈົ້າໜີ້ ຫາກໄດ້ຍ້າຍບ່ອນຢູ່ໃນເວລາປະຕິບັດສັນຍາ ແລະ ໄດ້ແຈ້ງໃຫ້ລູກໜີ້ຊາບໃນເວລານັ້ນ, ໃຫ້ປະຕິບັດຢູ່ບ່ອນຢູ່ໃໝ່ຂອງເຈົ້າໜີ້, ສ່ວນຄ່າໃຊ້ຈ່າຍທັງໝົດໃນການປະຕິບັດສັນຍານັ້ນ ແມ່ນເປັນພາລະຂອງເຈົ້າໜີ້;

3. ພັນທະອື່ນ ໃຫ້ປະຕິບັດຢູ່ບ່ອນຢູ່ຂອງລູກໜີ້ ໃນເວລາເຮັດສັນຍານັ້ນ. ຖ້າລູກໜີ້ຫາກ ແມ່ນນິຕິບຸກຄົນ ກໍໃຫ້ປະຕິບັດຢູ່ສຳນັກງານຂອງນິຕິບຸກຄົນນັ້ນ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ ສະຖານທີ່ປະຕິບັດສັນຍາຕາມທີ່ໄດ້ຕົກລົງກັນ ລວມທັງກໍລະນີທີ່ສັນຍາທີ່ບໍ່ໄດ້ຕົກລົງກ່ຽວກັບສະຖານທີ່ປະຕິບັດສັນຍາ.
ຕົວຢ່າງ	**ກໍລະນີ ຂໍ້ 1 ມາດຕາ 381:** **1. ກ** ຮັບເໝົາກໍ່ສ້າງສຳນັກງານໃຫ້ ບໍລິສັດ **ຂ** ພາຍໃນກຳນົດເວລາ ສາມປີ, ຊຶ່ງພາຍໃນກຳນົດເວລາ ສາມປີ **ກ** ຕ້ອງສ້າງສຳນັກງານ ຕາມແບບທີ່ບໍລິສັດ **ຂ** ຕ້ອງການ ໃຫ້ສຳເລັດຕາມກຳນົດເວລາ, ຊຶ່ງພາຍຫຼັງທີ່ກໍ່ສ້າງສຳເລັດແລ້ວ **ກ** ແລະ **ຂ** ຈຶ່ງໄດ້ປະຕິບັດໂດຍມອບຮັບອາຄານດັ່ງກ່າວຢູ່ສະຖານທີ່ກໍ່ສ້າງນັ້ນ. **ກໍລະນີ ຂໍ້ 2 ມາດຕາ 381:** **2. ກ** ໄດ້ກູ້ຢືມເງິນກັບ **ຂ** ຈຳນວນ 50.000.000 ກີບ ກຳນົດເວລາ ສາມປີ ຢູ່ທີ່ເຮືອນຂອງ **ຂ** ຊຶ່ງສັນຍາບໍ່ໄດ້ຕົກລົງກັນລະອຽດກ່ຽວກັບສະຖານທີ່ໃນການຊຳລະໜີ້, ເມື່ອຮອດກຳນົດເວລາ ສາມປີ **ກ** ຊຳລະທັງຕົ້ນທຶນ ແລະ ດອກເບ້ຍຕາມການຕົກລົງກັນຄືນໃຫ້ **ຂ** ຢູ່ທີ່ເຮືອນ **ຂ**. ກໍລະນີ **ຂ** ມີການຍ້າຍບ່ອນຢູ່ ຈາກບ້ານເກົ່າ ໄປຢູ່ທີ່ບ່ອນໃໝ່ຊຶ່ງ **ຂ** ໄດ້ແຈ້ງ **ກ** ຊາບແລ້ວ ເມື່ອຮອດກຳນົດເວລາ **ກ** ຕ້ອງໄດ້ຊຳລະຕົ້ນທຶນ ແລະ ດອກເບ້ຍ ຕາມທີ່ໄດ້ຕົກລົງກັນໃຫ້ **ຂ** ທີ່ບ່ອນໃໝ່ ຊຶ່ງຄ່າເດີນທາງ ຂອງ **ກ** ໃນການໄປປະຕິບັດສັນຍານັ້ນແມ່ນ **ຂ** ຕ້ອງເປັນຄົນຮັບຜິດຊອບ. ກໍລະນີນີ້ ແມ່ນຖືກຕາມຂໍ້ 2 ຂອງມາດຕາ 381. 3. ໃນວັນທີ 1 ຕຸລາ 2021 ສະມາຄົມ **ກ** ເຮັດສັນຍາສັ່ງຊື້ເຄື່ອງເຟີນິເຈີ (ຊຸດໂຕະຕັ່ງ) ຈາກບໍລິສັດ **ຂ** ຈຳນວນ 50 ຊຸດ ໃນລາຄາ 200.000.000 ກີບ, ຊຶ່ງໄດ້ຕົກລົງວັນສົ່ງເຄື່ອງ ແມ່ນວັນທີ 30 ຕຸລາ 2021 ແລະ ຊຳລະເງິນໃນເວລາທີ່ເຄື່ອງມາຮອດ ສະມາຄົມ **ກ**. **ກໍລະນີ ຂໍ້ 3 ມາດຕາ 381:** **4. ກ** ໄດ້ເຮັດສັນຍາຊື້ຮູບພາບນຳ **ຂ** ໃນລາຄາ 10.000.000 ກີບ ທີ່ຮ້ານຂາຍຮູບຂອງ **ຂ**. **ກ** ແລະ **ຂ** ແມ່ນໄດ້ປະຕິບັດສັນຍານຳກັນຢູ່ທີ່ຮ້ານຂາຍຮູບຂອງ **ຂ**.
ເຫດຜົນໃນການຮັກສາເນື້ອໃນເດີມ	ມາດຕານີ້ຮັກສາເນື້ອໃນເດີມຂອງມາດຕາ 27 ສະຖານທີ່ປະຕິບັດສັນຍາ ຂອງກົດ ໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ສະບັບ ປີ 2008.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 484 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 378, 379, 382, 383 ຂອງປະມວນກົດໝາຍແພ່ງ. ສະຖານທີ່ປະຕິບັດສັນຍາ ຕາມຫຼັກການຂອງມາດຕານີ້ແມ່ນມີຂໍ້ຍົກເວັ້ນຕາມ ມາດຕາ 410.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 382 ການຊຳລະ

ການຊຳລະ ອາດປະຕິບັດເປັນເງິນສົດ, ເງິນໂອນ, ແຊັກ ຫຼື ວັດຖຸ ຫຼື ແຮງງານ ຕາມການຕົກລົງ ເຫັນດີຂອງເຈົ້າໜີ້.

ການຊຳລະ ຈະມີຂຶ້ນໄດ້ກໍຕໍ່ເມື່ອຫາກມີການອອກໃບເກັບເງິນເສຍກ່ອນ.

ໃນການຊຳລະນັ້ນ ເຈົ້າໜີ້ຕ້ອງອອກໃບຮັບເງິນ ຫຼື ເອກະສານອື່ນ ດ້ວຍຕົນເອງ ຫຼື ຕາມຄຳຮ້ອງ ຂໍຂອງລູກໜີ້. ໃບຮັບເງິນ ຫຼື ເອກະສານອື່ນທີ່ກ່ຽວຂ້ອງ ຕ້ອງເຮັດທັນທີ ຫຼື ຢ່າງຊ້າພາຍໃນເວລາ ສິບຫ້າ ວັນ ພາຍຫຼັງທີ່ໄດ້ປະຕິບັດສັນຍາແລ້ວ.

ໃນກໍລະນີທີ່ມີການຊຳລະດ້ວຍແຊັກ, ວັນຊຳລະ ແມ່ນວັນທີ່ເຈົ້າໜີ້ສາມາດຖອນເງິນໄດ້. ໃນ ການຊຳລະເປັນເງິນໂອນ ໃຫ້ຖືວ່າວັນຊຳລະແມ່ນວັນທີ່ເງິນຖືກໂອນເຂົ້າບັນຊີຂອງເຈົ້າໜີ້. ໃນການຊຳລະ ທາງໄປສະນີ ໃຫ້ຖືວ່າວັນຊຳລະແມ່ນວັນທີ່ລູກໜີ້ໄດ້ມອບເງິນ ຫຼື ຊັບສິ່ງຂອງທາງໄປສະນີ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ກ່ຽວກັບ ຮູບການ, ວິທີການຊຳລະໃຫ້ຈະແຈ້ງ, ຊັດເຈນ ສອດຄ່ອງກັບສະພາບການເຄື່ອນໄຫວດ້ານການເງິນ.
ຕົວຢ່າງ	**1. ກ** ຊື້ແກ່ນກາເຟ ນຳ **ຂ** 1 ໂຕນ ເປັນເງິນ ຈຳນວນ 10.000.000 ກີບ, **ກ** ໄດ້ຊຳລະໂດຍຈ່າຍເງິນສົດ ໃຫ້ **ຂ** ມີໃບຮັບເງິນສົດ ເພື່ອເປັນຫຼັກຖານໃນ ການຊຳລະເງິນ. **2. ກ** ສັ່ງຊື້ແກ່ນກາເຟນຳ **ຂ** 1 ໂຕນ ເປັນເງິນ ຈຳນວນ 10.000.000 ກີບ ໂດຍໄດ້ຕົກລົງກັນວ່າ ຈະຊຳລະເງິນດ້ວຍການໂອນເງິນຜ່ານລະບົບ ທະນາຄານ ຊຶ່ງ **ກ** ໄດ້ໂອນເງິນເຂົ້າບັນຊີ ຂອງ **ຂ**, ວັນຊຳລະໜີ້ **ກ** ແມ່ນ ວັນທີເງິນເຂົ້າບັນຊີ **ຂ**. **3. ກ** ສັ່ງຊື້ແກ່ນກາເຟນຳ **ຂ** 1 ໂຕນ ເປັນເງິນ ຈຳນວນ 10.000.000 ກີບ ໂດຍໄດ້ຕົກລົງກັນວ່າ ຈະຊຳລະເງິນດ້ວຍແຊັກ ເມື່ອສິນຄ້າມາຮອດ **ກ** ໄດ້ ຂຽນແຊັກເງິນ ຈຳນວນ 10.000.000 ກີບ ໃຫ້ **ຂ** ຊຶ່ງສາມາດຖອນໄດ້ ພາຍໃນ 10 ວັນ, ສ່ວນ **ຂ** ກໍຕ້ອງໄດ້ເອົາແຊັກນັ້ນໄປຂຶ້ນເງິນນຳທະນາຄານ ເພື່ອຖອນເງິນ ພາຍໃນກຳນົດເວລາ 10 ວັນ, ວັນຊຳລະໜີ້ **ກ** ແມ່ນວັນທີ່ **ຂ** ໄດ້ຖອນເງິນສຳເລັດຈາກທະນາຄານ. **4. ກ** ເຮັດສັນຍາຊື້-ຂາຍ ໃບຊາແຫ້ງ ນຳ **ຂ** ຈຳນວນ 1 ໂຕນ ໃນລາຄາ 10.000.000 ກີບ ຊຶ່ງທັງສອງຝ່າຍຕົກລົງກັນວ່າ **ກ** ຜູ້ຊື້ຈະຊຳລະ ຄ່າ ສິນຄ້າເປັນເຄື່ອງເກັບກ່ຽວໃບຊາແຫ້ງທີ່ທັນສະໄໝ ໃນລາຄາ 12.000.000 ກີບ ໃຫ້ **ຂ** ຜູ້ຂາຍ, ເມື່ອຮອດກຳນົດເວລາໃນການຊຳລະ **ກ** ຈຶ່ງໄດ້ເອົາເຄື່ອງເກັບກ່ຽວໃບຊາແຫ້ງໃຫ້ກັບ **ຂ.** **5. ກ** ກູ້ຢືມເງິນນຳບໍລິສັດ **ຂ** ຈຳນວນ 3.000.000 ກີບ ໂດຍບໍ່ມີ ດອກ ເບ້ຍ ພາຍໃນກຳນົດເວລາ ສາມເດືອນ ໂດຍມີເງື່ອນໄຂว่า ເມື່ອຮອດ ກຳນົດເວລາ **ກ** ຕ້ອງສົ່ງເງິນຄືນຕາມສັນຍາ, ເມື່ອຮອດກຳນົດເວລາແຕ່ **ກ** ບໍ່ສາມາດໃຊ້ແທນເປັນເງິນໄດ້ ແລະ **ກ** ສະໝັກໃຈຢາກໃຊ້ແຮງງານຂອງ ຕົນເອງໃນການປະຕິບັດພັນທະແທນການຈ່າຍເງິນໂດຍ ການອານາໄມ ສຳນັກງານໃຫ້ບໍລິສັດຂອງ **ຂ** ເປັນເວລາ ສາມເດືອນ.
ເຫດຜົນໃນການຮັກສາເນື້ອ ໃນເດີມ	ມາດຕານີ້ຮັກສາເນື້ອໃນ ແລະ ຫຼັກການເດີມຂອງມາດຕາ 28 ການຊຳລະ ຂອງ ກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ປີ 2008.

ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 378, 379 ແລະ 380 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະ ເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 383 ລຳດັບການຊຳລະໜີ້

ການຊຳລະໜີ້ ໃຫ້ປະຕິບັດຕາມການຕົກລົງ.

ຖ້າມີຂໍ້ຂັດແຍ່ງ ກ່ຽວກັບລຳດັບການຊຳລະ ໃຫ້ປະຕິບັດຕາມລຳດັບ ດັ່ງນີ້:

1. ຄ່າໃຊ້ຈ່າຍຕ່າງໆ;
2. ຄ່າປັບໃໝ ຫຼື ດອກເບ້ຍ ສຳລັບສັນຍາກູ້ຍືມ;
3. ໜີ້ສິນ ຫຼື ຕົ້ນທຶນ ສຳລັບສັນຍາກູ້ຍືມ.

ຈຸດປະສົງ	ເພື່ອໃຫ້ກຳນົດໃຫ້ຮູ້ກ່ຽວກັບ ການຊຳລະ ຫຼື ການໃຊ້ແທນໜີ້ສິນ ທີ່ພໍ່ພຽງພໍກັບ ຈຳນວນໜີ້ ແລະ ມີຂໍ້ຂັດແຍ່ງກັນກ່ຽວກັບ ລຳດັບການຊຳລະໜີ້.
ຕົວຢ່າງ	**ກ** ກູ້ຍືມເງິນນຳ **ຂ** ມູນຄ່າ 3.000.000 ກີບ ດອກເບ້ຍ 3% ຕໍ່ເດືອນ, ກຳນົດເວລາ ໜຶ່ງປີ, ຕໍ່ມາ ຫົກເດືອນ **ກ** ໄດ້ຊຳລະເງິນໃຫ້ **ຂ** ມູນຄ່າ 2.000.000 ກີບ, ຊຶ່ງ **ກ** ບໍ່ໄດ້ບອກວ່າເງິນນັ້ນແມ່ນຊຳລະຕົ້ນທຶນ ຫຼື ດອກເບ້ຍ ໃຫ້ແກ່ **ຂ**, ເມື່ອສັນຍາສິ້ນສຸດແລ້ວ **ຂ** ໄດ້ທວງໃຫ້ **ກ** ຊຳລະຕົ້ນທຶນ ແລະ ດອກເບ້ຍທີ່ຍັງເຫຼືອໃຫ້ແກ່ຕົນ. **ກ** ອ້າງວ່າ ເງິນມູນຄ່າ 2.000.000 ກີບ ທີ່ຈ່າຍນັ້ນແມ່ນຊຳລະຕົ້ນທຶນ ແຕ່ **ຂ** ອ້າງວ່າ ເງິນຈຳນວນດັ່ງກ່າວແມ່ນເປັນການຊຳລະດອກເບ້ຍ ຂອງ ຫົກເດືອນນັ້ນ. ຈຶ່ງເກີດມີຂໍ້ຂັດແຍ່ງຂຶ້ນ ໃນກໍລະນີນີ້ ຕ້ອງໄດ້ລຽງລຳດັບ ໃນການໃຊ້ໜີ້ເປັນດັ່ງນີ້: 1. ຄ່າໃຊ້ຈ່າຍຕ່າງໆເຊັ່ນ: ຄ່າໃຊ້ຈ່າຍໃນການເດີນທາງ ມາທວງທາວໜີ້ສິນຂອງ **ຂ** ຫຼື ໃນການໄປຊຳລະໜີ້ສິນຂອງ **ກ** ໃນກໍລະນີຢູ່ຫ່າງໄກ; 2. ດອກເບ້ຍ 3% ຕໍ່ປີ ທີ່ໄດ້ກຳນົດໄວ້ໃນສັນຍານັ້ນ ແລະ 3. ຕົ້ນທຶນ ທີ່ໄດ້ກູ້ຍືມກັນຕາມສັນຍານັ້ນ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງຂຶ້ນໃໝ່ ເພື່ອກຳນົດກ່ຽວກັບລຳດັບການຊຳລະໜີ້ຂອງລູກໜີ້ ແລະ ເພື່ອແກ້ໄຂບັນຫາຂໍ້ຂັດແຍ່ງລະຫວ່າງ ລູກໜີ້ ແລະ ເຈົ້າໜີ້.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 488 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ; ມາດຕາ 328, 329 ຂອງປະມວນກົດໝາຍແພ່ງ ແລະ ພານິດໄທ.
ມາດຕາອ້າງອີງ	ມາດຕາ 378, 379, 380 ແລະ 382 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄ້ວາ.

ມາດຕາ 384 ການປິດໜີ້ ຫຼື ພັນທະ

ການປິດໜີ້ ຫຼື ພັນທະ ແມ່ນ ການທີ່ເຈົ້າໜີ້ສະແດງເຈດຈຳນົງຂອງຕົນໃນການບໍ່ໃຫ້ລູກໜີ້ມີໜີ້ ຫຼື ພັນທະຕໍ່ຕົນອີກ.

ການປິດໜີ້ ຫຼື ພັນທະ ຕ້ອງເຮັດເປັນລາຍລັກອັກສອນ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ກ່ຽວກັບ ຄວາມໝາຍ ແລະ ຮູບການຂອງການປິດໜີ້ ຫຼື ປິດພັນທະ.

ຕົວຢ່າງ	**1. ກ** ໄດ້ກູ້ຢືມເງິນນຳ **ຂ** ຈຳນວນ 1.000.000 ກີບ, ກຳນົດ ສາມເດືອນ. ສອງເດືອນ, ຕໍ່ມາ **ຂ** ຜູ້ເປັນເຈົ້າໜີ້ໄດ້ສະແດງເຈດຈຳນົງວ່າຈະບໍ່ເອົາເງິນທີ່ **ກ** ກູ້ຢືມນັ້ນອີກຕໍ່ໄປ ໂດຍການສະແດງເຈດຈຳນົງເປັນລາຍລັກອັກສອນ ວ່າບໍ່ໃຫ້ **ກ** ມີພັນທະຕໍ່ຕົນເອງອີກຕໍ່ໄປ. ສະນັ້ນ, ພັນທະ **ກ** ໄດ້ສິ້ນສຸດ. **2. ກ** ໄດ້ຈ້າງ **ຂ** ແຕ້ມຮູບຂອງຕົນ 2 ໃບ ຂະໜາດ 20x30 ຊັງຕີແມັດ ໃນລາຄາ 700.000 ກີບ, **ກ** ໄດ້ຈ່າຍຄ່າແຕ້ມຮູບໃຫ້ **ຂ** ແລ້ວ ຊຶ່ງ **ຂ** ຕ້ອງປະຕິບັດພັນທະຂອງຕົນໃນການແຕ້ມຮູບໃຫ້ສຳເລັດ ຕາມການຕົກລົງ. ຕໍ່ມາ **ຂ** ໄດ້ແຕ້ມແລ້ວ 1 ໃບ, ຕໍ່ມາ **ຂ** ໄດ້ເກີດອຸບປະຕິເຫດລົ້ມແຂນ ຫັກບໍ່ສາມາດແຕ້ມຮູບໄດ້ອີກ, ໄລຍະໜຶ່ງ **ກ** ຈຶ່ງໄດ້ສະແດງເຈດຈຳນົງເປັນລາຍລັກອັກສອນບໍ່ໃຫ້ **ຂ** ມີພັນທະໃນການແຕ້ມຮູບທີ່ຍັງເຫຼືອ 1 ໃບນັ້ນອີກ ໝາຍວ່າ ພັນທະຂອງ **ຂ** ໄດ້ ສິ້ນສຸດ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງຂຶ້ນໃໝ່ ເພື່ອເປັນການຢັ້ງຢືນກ່ຽວກັບການປົດໜີ້ ຫຼື ການຍົກໜີ້ຂອງເຈົ້າໜີ້ເອງ, ເພື່ອເປັນການແກ້ໄຂບັນຫາຕ່າງໆ ລະຫວ່າງເຈົ້າໜີ້ ແລະ ລູກໜີ້.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 340 ຂອງປະມວນກົດໝາຍແພ່ງ ແລະ ພານິດໄທ; ມາດຕາ 519 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ; ມາດຕາ 376 ຂອງປະມວນກົດໝາຍແພ່ງຫວຽດນາມ;
ມາດຕາອ້າງອີງ	ມາດຕາ 378 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 385 ການຫັກລົບໜີ້ ຫຼື ພັນທະ

ການຫັກລົບໜີ້ ຫຼື ພັນທະ ແມ່ນ ການໄລ່ລຽງໜີ້ ຫຼື ພັນທະ ຊຶ່ງຄູ່ສັນຍາຕ່າງຝ່າຍຕ່າງກໍມີໜີ້ ຫຼື ພັນທະຕໍ່ກັນ, ເວັ້ນເສຍແຕ່ກົດໝາຍຫາກໄດ້ກຳນົດໄວ້ເປັນຢ່າງອື່ນ.

ການຫັກລົບໜີ້ ຫຼື ພັນທະ ຕ້ອງເຮັດເປັນລາຍລັກອັກສອນ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ກ່ຽວກັບ ນິຍາມ ແລະ ຮູບການຂອງການຫັກລົບໜີ້ ຫຼື ພັນທະ
ຕົວຢ່າງ	**1. ກ** ໄດ້ກູ້ຢືມເງິນນຳ **ຂ** ມູນຄ່າ 4.000.000 ກີບ ເພື່ອເອົາໄປລົງທຶນຄ້າຂາຍ. ຕໍ່ມາ **ຂ** ໄດ້ໄປເອົາເຄື່ອງບໍລິໂພກຢູ່ຮ້ານຂາຍເຄື່ອງຍ່ອຍຂອງ **ກ** ຕີກເປັນເງິນມູນຄ່າ 3.500.000 ກີບ ຈາກນັ້ນ **ກ** ແລະ **ຂ** ຈຶ່ງໄດ້ມາຕົກລົງເຮັດບົດບັນທຶກໄລ່ລຽງໜີ້ສິ້ນກັນຄືນ ເພື່ອເປັນການຫັກລົບໜີ້ສິນເຊິ່ງກັນ ແລະ ກັນ ເປັນລາຍລັກອັກສອນ. **2. ກ** ເປັນນັກຮ້ອງທີ່ມີຊື່ໂດ່ງດັງ, **ຂ** ເປັນນັກແຕ້ມທີ່ມີຊື່ສຽງໂດ່ງດັງ, **ຂ** ໄດ້ຈ້າງ **ກ** ມາຮ້ອງເພງໃນງານແຕ່ງດອງຂອງລູກສາວຕົນ ແລະ ໃນເວລາຕໍ່ມາ **ກ** ກໍໄດ້ຈ້າງ **ຂ** ເພື່ອແຕ້ມຮູບຂອງຕົນ, ໃນກໍລະນີນີ້ **ກ** ແລະ **ຂ** ຕ່າງຝ່າຍຕ່າງມີພັນທະ ຕໍ່ກັນ ຊຶ່ງ **ກ** ແລະ **ຂ** ໄດ້ຕົກລົງກັນ ເຮັດບົດບັນທຶກໄລ່ລຽງການຫັກລົບພັນທະຕໍ່ກັນເປັນລາຍລັກອັກສອນ. **ກໍລະນີຍົກເວັ້ນ**

	3. **ກ** ເປັນພະນັກງານ **ຂ, ກ** ມີໄດ້ຮັບເງິນເດືອນລະ 1.500.000 ກີບ, ຕໍ່ມາ **ກ** ໄດ້ສ້າງຄວາມເສຍຫາຍໃຫ້ໂຮງງານ **ຂ** ດ້ວຍຄວາມຜິດຂອງຜູ້ກ່ຽວເອງ ຊຶ່ງຕ້ອງໃຊ້ແທນເງິນຄືນໃຫ້ໂຮງງານ **ຂ** ຈຳນວນ 25.000.000 ກີບ, **ກ** ມີພັນທະໃນການໃຊ້ໜີ້ດັ່ງກ່າວໃຫ້ໝົດ, ສ່ວນ **ຂ** ຍັງມີພັນທະຈ່າຍເງິນເດືອນໃຫ້ **ກ** ຢ່າງເປັນປົກກະຕິ. ແຕ່ **ກ** ບໍ່ສາມາດໃຊ້ແທນມູນຄ່າຄວາມເສຍຫາຍນັ້ນເທື່ອດຽວ, **ກ** ແລະ **ຂ** ຕົກລົງຈະໄລ່ລ່ຽງໜີ້ສິນເຊິ່ງກັນ ແລະ ກັນດ້ວຍການຫັກເອົາເງິນເດືອນ **ກ** ເດືອນລະ 1.000.000 ກີບ ມາໃຊ້ແທນມູນຄ່າຄວາມເສຍຫາຍທີ່ **ກ** ໄດ້ກໍ່ຂຶ້ນນັ້ນ. ສິ່ງທີ່ **ກ** ແລະ **ຂ** ຕົກລົງຫັກເອົາເງິນເດືອນ **ກ** ເດືອນລະ 1.000.000 ກີບ ນັ້ນ ແມ່ນບໍ່ສາມາດເຮັດໄດ້ ເນື່ອງຈາກກົດໝາຍແຮງງານ ມາດຕາ 113 ໄດ້ກຳນົດໄວ້ສະເພາະ ຊຶ່ງ **ຂ** ສາມາດຫັກເອົາເງິນເດືອນ **ກ** ໄດ້ແຕ່ບໍ່ໃຫ້ເກີນ 20% ຂອງເງິນເດືອນ (20% ຂອງເງິນເດືອນ 1.500.000 ກີບ = 300.000 ກີບ) ໝາຍວ່າ **ຂ** ສາມາດຫັກໄດ້ເດືອນລະ 300.000 ກີບ ເທົ່ານັ້ນ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງຂຶ້ນໃໝ່ ເພື່ອໃຫ້ຮູ້ນິຍາມ ແລະ ຮູບການ ລວມໄປເຖິງການຢັ້ງຢືນກ່ຽວກັບການຫັກລົບໜີ້ ຫຼື ພັນທະ ລະຫວ່າງເຈົ້າໜີ້ ແລະ ລູກໜີ້. ການຫັກລົບໜີ້ ຫຼື ພັນທະ ຕ້ອງມີການຕົກລົງທັງສອງຝ່າຍ ເປັນລາຍລັກອັກສອນ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 505 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ; ມາດຕາ 378, 379 ຂອງປະມວນກົດໝາຍແພ່ງຫວຽດນາມ.
ມາດຕາອ້າງອີງ	ມາດຕາ 378, 379, 382 ແລະ 384 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພ ນິສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 386 ການແຈ້ງຂໍ້ຫຍຸ້ງຍາກໃນການປະຕິບັດສັນຍາ

ເມື່ອມີຂໍ້ຫຍຸ້ງຍາກເກີດຂຶ້ນ ໃນການປະຕິບັດສັນຍາ ເຖິງວ່າຄູ່ສັນຍາຝ່າຍໃດໜຶ່ງ ຫາກໄດ້ພະຍາຍາມພຽງໃດ ກໍບໍ່ສາມາດປະຕິບັດພັນທະຂອງຕົນໄດ້ຢ່າງສະໝ່ຳສະເໝີນັ້ນ, ຜູ້ກ່ຽວຕ້ອງແຈ້ງສາເຫດຂອງຂໍ້ຫຍຸ້ງຍາກດັ່ງກ່າວໃຫ້ອີກຝ່າຍໜຶ່ງຊາບໃນເວລາອັນເໝາະສົມ ກ່ອນກຳນົດເວລາຂອງການປະຕິບັດສັນຍາຈະສິ້ນສຸດ.

ການແຈ້ງຂໍ້ຫຍຸ້ງຍາກ ຈະບໍ່ເປັນສາເຫດທີ່ພາໃຫ້ລູກໜີ້ ພົ້ນຈາກຄວາມຮັບຜິດຊອບຂອງຕົນໄປໄດ້, ພາຍຫຼັງທີ່ຂໍ້ຫຍຸ້ງຍາກ ຫາກໄດ້ສິ້ນສຸດລົງແລ້ວ, ລູກໜີ້ ກໍຈະສືບຕໍ່ປະຕິບັດພັນທະຕາມສັນຍານັ້ນ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ກ່ຽວກັບ ພັນທະຂອງຄູ່ສັນຍາໃນການແຈ້ງຂໍ້ຫຍຸ້ງຍາກໃນການ ປະຕິ ບັດສັນຍາໃຫ້ແກ່ກັນຊາບ.
ຕົວຢ່າງ	**1.** **ກ** ບໍລິສັດຮັບຈັດງານລ້ຽງ ສັ່ງຊື້ງົວປົ່ນຈາກ **ຂ** ຈຳນວນ 2 ໂຕ ມູນຄ່າ 5.000.000 ກີບ ໃນວັນທີ 1 ມັງກອນ 2021 ໄດ້ວາງເງິນມັດຈຳກ່ອນມູນຄ່າ 2.000.000 ກີບ ແລະ ໄດ້ບອກໃຫ້ **ຂ** ເອົາມາສົ່ງຢູ່ ບໍລິສັດຂອງ **ກ** ໃນວັນທີ 5 ມັງກອນ 2021 ເພື່ອຮັບໃຊ້ໃນການຈັດງານລ້ຽງໃຫ້ບໍລິສັດ **ຄ.** ມາຮອດວັນທີ 3 ມັງກອນ 2021 **ຂ** ຍັງບໍ່ສາມາດຊອກຊື້ງົວມາປຸງແຕ່ງອາຫານໄດ້ຍ້ອນວ່າ ໄດ້ເກີດພະຍາດລະບາດ ອົງການປົກຄອງເມືອງ ໄດ້ມີແຈ້ງການຫ້າມ ບໍ່ໃຫ້ຂ້າງົວ ຫຼື ຊື້-ຂາຍງົວໃນທ້ອງຕະຫຼາດ ແລະ ໃຫ້ປິດໂຮງງານຂ້າສັດຕ່າງໆຊົ່ວຄາວ, ສະນັ້ນ **ຂ** ໄດ້ແຈ້ງ ຂໍ້ຫຍຸ້ງຍາກດັ່ງກ່າວນັ້ນໃຫ້ **ກ** ຊາບ, ຫລັງຈາກນັ້ນ **ກ** ກໍຕ້ອງໄດ້ແຈ້ງຕໍ່ກັບ **ຄ** ຊາບອີກ.

	ໃນກໍລະນີທີ່ **ຂ** ແຈ້ງໃຫ້ **ກ** ຊາບ ໃນວັນທີ 5 ມັງກອນ 2021 ຊຶ່ງເປັນເວລາທີ່ **ກ** ຈັດງານລ້ຽງໃຫ້ບໍລິສັດຂອງ **ຄ** ນັ້ນແມ່ນເປັນການແຈ້ງທີ່ບໍ່ເໝາະສົມເນື່ອງຈາກວ່າສ້າງຄວາມອັບປະໂຫຍດໃຫ້ແກ່ **ກ** ເພາະບໍ່ມີງົວ ຫຼື ບໍ່ທັນໄດ້ກະກຽມສັດອື່ນໃນງານລ້ຽງໃຫ້ແກ່ບໍລິສັດ **ຄ** ຫຼື ຖືກບໍລິສັດ **ຄ** ປັບໃໝ ກໍລະນີນີ້ **ກ** ສາມາດທວງເອົາເງິນມັດຈຳຈາກ **ຂ** ແລ້ວກໍຍັງມີສິດທວງໃຫ້ **ຂ** ໃຊ້ແທນຄວາມເສຍຫາຍທີ່ເກີດຂຶ້ນຈາກການແຈ້ງຂໍ້ຫຍຸ້ງຍາກຊັກຊ້ານັ້ນໄດ້ຕາມຄວາມເສຍຫາຍຕົວຈິງ. **2.** **ກ** ໄດ້ກູ້ຍືມເງິນນຳ **ຂ** ມູນຄ່າ 20.000.000 ກີບ, ດອກເບ້ຍ 2% ຕໍ່ເດືອນ, ກຳນົດເວລາໃນການຊຳລະຕົ້ນທຶນ ແລະ ດອກເບ້ຍໃນວັນທີ 15 ຂອງທຸກໆເດືອນເປັນເວລາ ຫົກເດືອນ, **ກ** ໄດ້ປະຕິບັດພັນທະຂອງຕົນຢ່າງປົກກະຕິມາຕະຫຼອດ, ຈົນຮອດເດືອນທີ 4 **ກ** ໄດ້ຮັບບາດເຈັບຈາກອຸບປະຕິເຫດ ຊຶ່ງບໍ່ສາມາດໄປຫາເງິນມາປະຕິບັດພັນທະໄດ້ **ກ** ຈຶ່ງໄດ້ແຈ້ງຂໍ້ຫຍຸ້ງຍາກໃຫ້ແກ່ **ຂ** ຊາບໃນວັນທີ 10 ຂອງເດືອນທີ 4 ນັ້ນ, **ຂ** ຮັບຊາບ ແລະ ເຂົ້າໃຈ ຈຶ່ງໃຫ້ **ກ** ພັກຜ່ອນປິ່ນປົວກ່ອນ ແລະ ພາຍຫຼັງທີ່ **ກ** ດີຈາກການເຈັບເປັນແລ້ວ **ກ** ຍັງມີພັນທະໃນການຊຳລະໜີ້ສິນທີ່ຍັງເຫຼືອໃຫ້ແກ່ **ຂ** ຈົນສຳເລັດ.
ເຫດຜົນໃນການຮັກສາເນື້ອໃນເດີມ	ມາດຕານີ້ຮັກສາເນື້ອໃນ ແລະ ຫຼັກການເດີມຂອງມາດຕາ 29 ການແຈ້ງຂໍ້ຫຍຸ້ງຍາກໃນການປະຕິບັດສັນຍາ ຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ປີ 2008.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 378, 379, 382 ແລະ 387 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 387 ການໂຈະການປະຕິບັດສັນຍາ

ຄູ່ສັນຍາຝ່າຍໃດໜຶ່ງ ທີ່ໄດ້ປະຕິບັດພັນທະຂອງຕົນສ່ວນໃດໜຶ່ງແລ້ວ ອາດໂຈະການປະຕິບັດພັນທະຂອງຕົນໂດຍແຈ້ງໃຫ້ຄູ່ສັນຍາອີກຝ່າຍໜຶ່ງໃນທັນທີ ຖ້າເຫັນວ່າຄູ່ສັນຍາຝ່າຍທີ່ຖືກແຈ້ງໂຈະນັ້ນ ຫາກຕົກຢູ່ໃນສະພາບໃດໜຶ່ງ ຊຶ່ງອາດສ້າງຜົນເສຍຫາຍໃຫ້ແກ່ຕົນ ດັ່ງນີ້:

1. ຖືກຮ້ອງຟ້ອງ ຫຼື ຮ້ອງຂໍ ໃຫ້ລົ້ມລະລາຍ;
2. ຂາດຄວາມເຊື່ອຖືໃນການດຳເນີນທຸລະກິດ ຊຶ່ງອາດຈະບໍ່ສາມາດປະຕິບັດສັນຍາໄດ້;
3. ຕົກຢູ່ໃນສະພາບ ທີ່ເຮັດໃຫ້ຜູ້ກ່ຽວ ບໍ່ສາມາດປະຕິບັດສັນຍາໄດ້.

ຄູ່ສັນຍາທີ່ໄດ້ໂຈະການປະຕິບັດ ຕ້ອງຮັບຜິດຊອບຕໍ່ຄູ່ສັນຍາອີກຝ່າຍໜຶ່ງ ກ່ຽວກັບຄວາມເສຍຫາຍທີ່ເກີດຂຶ້ນ ຖ້າການໂຈະນັ້ນ ຫາກໄດ້ເຮັດຂຶ້ນໂດຍບໍ່ມີສະພາບຕາມທີ່ກ່າວມາຂ້າງເທິງນີ້.

ຖ້າຄູ່ສັນຍາທີ່ຖືກແຈ້ງກ່ຽວກັບການໂຈະການປະຕິບັດສັນຍາ ຫາກສາມາດຢັ້ງຢືນ ຫຼື ໃຫ້ການຄ້ຳປະກັນໃນການປະຕິບັດສັນຍາທີ່ເໝາະສົມ ກ່ຽວກັບຄວາມສາມາດໃນການປະຕິບັດພັນທະຂອງຕົນ ຄູ່ສັນຍາທີ່ໄດ້ໂຈະນັ້ນ ຕ້ອງສືບຕໍ່ປະຕິບັດພັນທະຂອງຕົນ. ໃນກໍລະນີທີ່ບໍ່ສາມາດຢັ້ງຢືນ ຫຼື ໃຫ້ການຄ້ຳປະກັນທີ່ເໝາະສົມໄດ້, ຄູ່ສັນຍາທີ່ໂຈະນັ້ນ ສາມາດຍົກເລີກສັນຍາໄດ້. ສຳລັບການປະຕິບັດພັນທະຜ່ານມາ ຄູ່ສັນຍາທີ່ຖືກແຈ້ງໂຈະນັ້ນ ຕ້ອງທົດແທນຄືນໃຫ້ແກ່ຄູ່ສັນຍາທີ່ຍົກເລີກ.

ການໂຈະການປະຕິບັດສັນຍາ ສາມາດດຳເນີນໄດ້ໃນສັນຍາທຸກປະເພດ, ເວັ້ນເສຍແຕ່ສັນຍາຝ່າຍດຽວ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ກັບ ການປົກປ້ອງສິດ ແລະ ຜົນປະ�โຫຍດຂອງຄູ່ສັນຍາໃນການປະຕິບັດສັນຍາ ທີ່ເຫັນວ່າອາດຈະສ້າງຜົນເສຍຫາຍໃຫ້ແກ່ຕົນເອງ ແລະ ຂໍ້ຍົກເວັ້ນຂອງການໂຈະການປະຕິບັດສັນຍາ.
ຕົວຢ່າງ	**1.** **ກ** ບໍລິສັດອອກແບບ-ສ້າງຫຼວດ ແລະ ຂຸດຄົ້ນຈຳກັດຜູ້ດຽວ ໄດ້ເຮັດສັນຍາຮັບເໝົາຂຸດຄົ້ນຖ່ານຫີນ ໃຫ້ບໍລິສັດ **ຂ** ກຳນົດເວລາ ສອງປີ ພາຍຫຼັງເຮັດສັນຍາແລ້ວ ຫົກເດືອນ ບໍລິສັດ **ຂ** ຖືກຮ້ອງໃຫ້ເປັນຜູ້ລົ້ມລະລາຍ ເມື່ອເປັນດັ່ງນັ້ນ ບໍລິສັດ **ກ** ຈຶ່ງໄດ້ແຈ້ງໂຈະການປະຕິບັດພັນທະຂອງຕົນຕໍ່ບໍລິສັດ **ຂ** ຍ້ອນວ່າຖ້າບໍລິສັດ **ຂ** ເປັນຜູ້ລົ້ມລະລາຍແທ້ກໍອາດຈະບໍ່ມີເງິນມາຊຳລະຄ່າແຮງງານທີ່ໄດ້ຂຸດຄົ້ນນັ້ນຕາມສັນຍາ ຕາມ ຂໍ້ 1 ວັກໜຶ່ງ ຂອງມາດຕາ 387. ໃນກໍລະນີນີ້ **ຂ** ຫາກໃຫ້ການຄ້ຳປະກັນວ່າ ສາມາດຈ່າຍຄ່າແຮງງານໃນການຮັບເໝົາຂຸດຄົ້ນຖ່ານຫີນນັ້ນໃຫ້ແກ່ ບໍລິສັດ **ກ** ແລ້ວ, **ກ** ຈະຕ້ອງສືບຕໍ່ປະຕິບັດພັນທະຕົນເອງຕາມສັນຍາ ແຕ່ຖ້າ **ຂ** ຫາກບໍ່ສາມາດໃຫ້ການຄ້ຳປະກັນວ່າຈະຊຳລະເງິນຄ່າແຮງງານໃຫ້ **ກ** ໄດ້ແລ້ວ **ກ** ມີສິດຍົກເລີກສັນຍາໄດ້ ຊຶ່ງການຍົກເລີກສັນຍາການຂຸດຄົ້ນຜ່ານມາໃນໄລຍະ ຫົກເດືອນນັ້ນ **ຂ** ຕ້ອງໄດ້ທົດແທນຄືນ ພ້ອມທັງຄິດໄລ່ຄວາມເສຍຫາຍໃຫ້ແກ່ **ກ** ຕາມ ຂໍ້ 2 ວັກໜຶ່ງ ແລະ ວັກ ສາມ ຂອງມາດຕາ 387. **2.** **ກ** ເຮັດສັນຍາຊື້-ຂາຍສິດນຳໃຊ້ເຮືອນນຳ **ຂ**, ແຕ່ກ່ອນທີ່ **ກ** ຈະມອບເຮືອນນັ້ນ ໄດ້ເກີດໄຟໄໝ້ ແລະ ເຮືອນຖືກທຳລາຍໄປ. ໃນກໍລະນີນີ້ **ກ** ສາມາດຮຽກຮ້ອງຄ່າເສຍຫາຍໄດ້, ຖ້າວ່າ **ກ** ຫາກໄດ້ມີການໃຊ້ຈ່າຍບາງຢ່າງ ເປັນຕົ້ນແມ່ນ ຄ່າແລ່ນເອກະສານຕ່າງໆ ໃນການປ່ຽນກຳມະສິດຕໍ່ເຮືອນດັ່ງກ່າວ ກໍລະນີແມ່ນຖືກຕາມ ຂໍ້ 3 ວັກໜຶ່ງ ແລະ ວັກສອງ ຂອງມາດຕາ 387. **3.** **ກ** ຢູ່ແຂວງ ວຽງຈັນ ເຮັດສັນຍາຊື້ແກ່ນກາເຟນຳ **ຂ** ຢູ່ແຂວງ ຈຳປາສັກ ຈຳນວນ 5 ໂຕນ ລວມມູນຄ່າ 100.000.000 ກີບ ກຳນົດເວລາສົ່ງ 2 ອາທິດ ຈາກ ແຂວງ ຈຳປາສັກ ຫາ ແຂວງ ວຽງຈັນ, ໃນອາທິດທີ 1 ແມ່ນໄດ້ສົ່ງ ແລ້ວ 3 ໂຕນ ຍັງເຫຼືອອີກ 2 ໂຕນ, ເມື່ອຮອດອາທິດທີ 2 ຕ້ອງໄດ້ສົ່ງ **ກ** ໄດ້ແຈ້ງໂຈະການປະຕິບັດສັນຍາຍ້ອນວ່າແຂວງ ຈຳປາສັກ ພົບບັນຫານ້ຳຖ້ວມໜັກ ບໍ່ສາມາດເດີນທາງໄດ້ຕາມກຳນົດເວລາ. ໃນກໍລະນີນີ້ **ຂ** ຫາກສາມາດຢັ້ງຢືນວ່າການຂົນສົ່ງໂດຍທາງອື່ນເຊັ່ນວ່າ: ຍົນ... ແມ່ນຍັງສາມາດຂົນສົ່ງໄດ້ປົກກະຕິ ແລະ ທັນເວລາ, ແຕ່ອາດຈະມີຄ່າໃຊ້ຈ່າຍສູງເພີ່ມຂຶ້ນ **ກ** ຈະຕ້ອງໄດ້ສືບຕໍ່ປະຕິບັດພັນທະຮັບເອົາແກ່ນກາເຟນັ້ນ. ແຕ່ຖ້າ **ຂ** ຫາກບໍ່ສາມາດຢັ້ງຢືນມີການຂົນສົ່ງທາງອື່ນທີ່ຈະເດີນທາງໄດ້ຕາມກຳນົດເວລານັ້ນ ຫຼື ບໍ່ **ກ** ສາມາດຍົກເລີກສັນຍານັ້ນໄດ້. ສຳລັບການປະຕິບັດພັນທະຜ່ານມາ **ຂ** ຕ້ອງໄດ້ທົດແທນຄືນ ພ້ອມທັງຄິດໄລ່ຄວາມເສຍຫາຍໃຫ້ແກ່ **ກ** ຕາມ ວັກສາມ ຂອງມາດຕາ 387. **ກໍລະນີຍົກເວັ້ນຕາມວັກ 4 ຂອງມາດຕາ 387** **4.** ໃນວັນທີ 1 ມັງກອນ 2021 **ກ** ໄດ້ມອບລິດກະບະໜຶ່ງຄັນໃຫ້ເປັນກຳມະສິດຂອງ **ຂ** ຜູ້ເປັນລູກຊາຍໂດຍຊ້ອງໜ້າອ້າຍເອື້ອຍນ້ອງຂອງ **ຂ**. ພາຍຫຼັງທີ່ໄດ້ມອບລິດໃຫ້ແລ້ວ **ຂ** ໄດ້ຂັບໄປຫຼິ້ນກັບເດີກທຸກມື້, ຈົນຮອດວັນທີ 1 ມີຖຸນາ 2021 **ກ** ຈຶ່ງໄດ້ແຈ້ງໂຈະບໍ່ໃຫ້ **ຂ** ນຳໃຊ້ລິດກະບະດັ່ງກ່າວ. ກໍລະນີນີ້ **ກ** ບໍ່ສາມາດໂຈະໄດ້ ຍ້ອນວ່າການມອບຊັບເປັນສັນຍາຝ່າຍດຽວ.
ເຫດຜົນໃນການຮັກສາເນື້ອໃນເດີມ	ມາດຕານີ້ຮັກສາເນື້ອໃນ ແລະ ຫຼັກການເດີມຂອງມາດຕາ 30 ການໂຈະການປະຕິບັດສັນຍາ ຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ປີ 2008.

ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 321 ຂອງປະມວນກົດໝາຍແພ່ງເຢຍລະມັນ.
ມາດຕາອ້າງອີງ	ມາດຕາ 16, 365 ແລະ 386 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະ ເພນີສານ	ສືບຕໍ່ຄົ້ນຄວ້າ.

ໝວດທີ 5
ມາດຕະການຮັບປະກັນການປະຕິບັດສັນຍາ

ມາດຕາ 388 ມາດຕະການຮັບປະກັນການປະຕິບັດສັນຍາ

ເພື່ອຮັບປະກັນການປະຕິບັດສັນຍາຢ່າງມີປະສິດທິຜົນ ກົດໝາຍໄດ້ອະນຸຍາດໃຫ້ນຳໃຊ້ມາດຕະການຕ່າງໆ ເຊັ່ນ ການມັດຈຳ, ການປັບໃໝ, ການຈຳນຳ, ການຈຳນອງ, ການຄ້ຳປະກັນດ້ວຍບຸກຄົນ ຫຼື ນິຕິບຸກຄົນ.

ການຈຳນຳ, ການຈຳນອງ, ການຄ້ຳປະກັນດ້ວຍ ບຸກຄົນ ຫຼື ນິຕິບຸກຄົນ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນພາກທີ VII ຂອງປະມວນກົດໝາຍສະບັບນີ້.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ກ່ຽວກັບ ມາດຕະການຮັບປະກັນການປະຕິບັດສັນຍາ ໃຫ້ມີຄວາມຈະແຈ້ງ ຊັດເຈນ ຂຶ້ນຕື່ມ.
ຕົວຢ່າງ	1. ການມັດຈຳ ເບິ່ງ ໃນມາດຕາ 389 ຂອງປະມວນກົດໝາຍແພ່ງ; 2. ການປັບໃໝ ເບິ່ງໃນມາດຕາ 390 ຂອງປະມວນກົດໝາຍແພ່ງ; 3. ການຈຳນຳ ເບິ່ງໃນມາດຕາ 526 ຂອງປະມວນກົດໝາຍແພ່ງ; 4. ການຈຳນອງ ເບິ່ງໃນມາດຕາ 546 ຂອງປະມວນກົດໝາຍແພ່ງ; 5. ການຄ້ຳປະກັນດ້ວຍບຸກຄົນ ຫຼື ນິຕິບຸກຄົນ ແມ່ນເບິ່ງໃນມາດຕາ 556 ຂອງປະມວນກົດໝາຍແພ່ງ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ເນື້ອໃນມາດຕາ 34 ມາດຕະການ ການຮັບປະກັນການປະຕິບັດສັນຍາ ຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ປີ 2008, ໂດຍໄດ້ຕື່ມ ກ່ຽວກັບ "**ການມັດຈຳ**" ເຂົ້າໃໝ່ ໂດຍອີງໃສ່ສັງຄົມປັດຈຸບັນ ຊຶ່ງໄດ້ມີການປະຕິບັດຮູບການລັກສະນະນີ້ຫຼາຍ ແລະ ການປະຕິບັດຮູບການລັກສະນະດັ່ງກ່າວ ເຂົ້າສູ່ລະບົບກົດໝາຍ ຈຶ່ງໄດ້ກຳນົດເຂົ້າເປັນຮູບການໜຶ່ງໃນການປະຕິບັດມາດຕະການປະຕິບັດສັນຍາ ແລະ ປັບປຸງຄຳສັບວ່າ "**ການຊຸດຈຳ**" ມາເປັນ "**ການຈຳນຳ**" ແລະ "**ການຄ້ຳປະກັນດ້ວຍຫຼັກຊັບ**" ມາເປັນ "**ການຈຳນອງ**" ເພື່ອເຮັດໃຫ້ ມາດຕະການຮັບປະກັນການປະຕິບັດຕາມສັນຍາ ມີຄວາມຈະແຈ້ງ ແລະ ຊັດເຈນ ຂຶ້ນຕື່ມ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 292 ຂອງປະມວນກົດໝາຍແພ່ງຫວຽດນາມ.
ມາດຕາອ້າງອີງ	ມາດຕາ 389, 390, 525, 526, 546, 556 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 389 ການມັດຈຳ

ການມັດຈຳ ແມ່ນ ການຕົກລົງຂອງຄູ່ສັນຍາ ຊຶ່ງຜູ້ມັດຈຳ ໄດ້ເອົາເງິນຈຳນວນໜຶ່ງ ໄປໄວ້ນຳຜູ້ຮັບມັດຈຳ ເພື່ອເປັນຫຼັກຖານວ່າ ສັນຍາໄດ້ເກີດຂຶ້ນແລ້ວ ແລະ ຮັບປະກັນການປະຕິບັດສັນຍານັ້ນ.

ຖ້າຜູ້ມັດຈຳ ຫາກລະເມີດສັນຍາ ເງິນທີ່ມັດຈຳໄວ້ນັ້ນ ຈະບໍ່ສົ່ງຄືນໃຫ້ຜູ້ກ່ຽວ, ເວັ້ນເສຍແຕ່ຫາກ

ໄດ້ຕົກລົງກັນໄວ້ເປັນຢ່າງອື່ນ.

ຖ້າຜູ້ຮັບມັດຈຳຫາກລະເມີດສັນຍາ ໃຫ້ຜູ້ກ່ຽວສົ່ງເງິນມັດຈຳຄືນ ພ້ອມທັງຖືກປັບໃໝເທົ່າຕົວ ໃຫ້ແກ່ຜູ້ມັດຈຳ, ເວັ້ນເສຍແຕ່ຫາກໄດ້ຕົກລົງກັນໄວ້ເປັນຢ່າງອື່ນ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ກ່ຽວກັບ ການປົກປ້ອງສິດ ແລະ ຜົນປະ�โຫຍດຂອງຄູ່ສັນຍາ ໃນການວາງເງິນມັດຈຳ ແລະ ຜົນຂອງການມັດຈຳ ໂດຍມີເຈດຕະນາເພື່ອບັງຄັບ ໃຫ້ຄູ່ສັນຍາທີ່ບໍ່ປະຕິບັດຕາມສັນຍາ.
ຕົວຢ່າງ	**1. ກ** ເຮັດສັນຍາຊື້-ຂາຍ ສິດນຳໃຊ້ທີ່ດິນ 1 ຕອນ ກັບ **ຂ** ໃນລາຄາ 500.000.000 ກີບ, ໂດຍໄດ້ຕົກລົງກັນວ່າ **ກ** ຕ້ອງຈ່າຍເງິນມັດຈຳ ກ່ອນ 30.000.000 ກີບໃຫ້ **ຂ** ໄວ້ກ່ອນ, ຫຼັງຈາກປະກອບເອກະສານ ການມອບໂອນສິດນຳໃຊ້ທີ່ດິນດັ່ງກ່າວສຳເລັດແລ້ວ **ກ** ຕ້ອງຈ່າຍເງິນໃນ ຈຳນວນ 470.000.000 ກີບ ໃຫ້ **ຂ**. ໃນກໍລະນີ **ກ** ລະເມີດສັນຍາ ບໍ່ຊື້ ສິດນຳໃຊ້ທີ່ດິນ ຕາມສັນຍາ ເງິນມັດຈຳທີ່ **ກ** ວາງຈຳນວນ 30.000.000 ກີບ ກໍຈະຕົກເປັນຂອງ **ຂ**, ຖ້າວ່າ **ຂ** ຜູ້ຂາຍສິດນຳໃຊ້ທີ່ດິນ ລະເມີດສັນຍາ ບໍ່ຂາຍສິດນຳໃຊ້ຕາມການຕົກລົງ ຈະຖືກປັບໃໝເທົ່າຕົວ ຈາກເງິນມັດຈຳ 30.000.000 ກີບ ເປັນ 60.000.000 ກີບ ຊຶ່ງ **ຂ** ຕ້ອງສົ່ງເງິນຈຳນວນ 60.000.000 ກີບ ໃຫ້ **ກ**. 2. ໃນວັນທີ 1 ມັງກອນ 2021 **ກ** ຕົກລົງຊື້ລົດເກັງນຳ **ຂ** ໜຶ່ງຄັນໃນລາຄາ 200.000.000 ກີບ ຊຶ່ງໄດ້ຕົກລົງກັນວ່າ **ກ** ຕ້ອງໄດ້ຈ່າຍເງິນໃຫ້ **ຂ** ກ່ອນ ຈຳນວນ 5.000.000 ກີບ ກ່ອນທີ່ລົດຄັນນັ້ນຈະມາຮອດຕາມກຳນົດ ເວລາ (ວັນທີ 30 ມັງກອນ 2021) ເພື່ອເປັນການຮັບປະກັນວ່າ **ກ** ຈະຊື້ ລົດຄັນດັ່ງກ່າວແທ້, ຖ້າ **ກ** ບໍ່ມາເອົາລົດຕາມເວລາທີ່ໄດ້ຕົກລົງກັນ ເງິນມັດ ຈຳດັ່ງກ່າວ ຈະຕົກເປັນຂອງ **ຂ** ແລະ ໃນສັນຍາຍັງໄດ້ກຳນົດອີກວ່າ **ຂ** ຈະ ຕ້ອງມອບລົດຕາມກຳນົດເວລາທີ່ໄດ້ຕົກລົງກັນ ຖ້າ **ຂ** ບໍ່ສາມາດມອບລົດ ໄດ້ ຈະຖືກປັບໄໝສອງເທົ່າຂອງເງິນມັດຈຳຈາກ 5.000.000 ກີບ ເປັນ 10.000.000 ກີບ, ເມື່ອຮອດກຳນົດເວລາ **ກ** ຕ້ອງມາຮັບເອົາລົດ ແລະ ຈ່າຍເງິນສ່ວນທີ່ເຫຼືອ ຈຳນວນ 195.000.000 ກີບ ຕາມການຕົກລົງກັນ. ໃນກໍລະນີທີ່ຮອດກຳນົດເວລາ 1 ເດືອນ **ຂ** ບໍ່ສາມາດມອບລົດດັ່ງກ່າວໃຫ້ **ກ** ໄດ້, **ຂ** ຕ້ອງຮັບຜິດຊອບສົ່ງເງິນໃຫ້ **ກ** ຄືນ ຈຳນວນ 10.000.000 ກີບ. **3. ກ** ເຊົ່າຫ້ອງແຖວຂອງ **ຂ** ລາຄາເຊົ່າ 1.000.000 ກີບ ຕໍ່ເດືອນ, ກຳນົດ ເວລາ 1 ປີ ໂດຍທີ່ **ກ** ຕ້ອງໄດ້ຈ່າຍເງິນມັດຈຳໃຫ້ **ຂ** ກ່ອນ 500.000 ກີບ ເງິນມັດຈຳດັ່ງກ່າວເພື່ອໃຊ້ຈ່າຍຄ່າເສຍຫາຍຕ່າງໆເປັນຕົ້ນແມ່ນ ຄ່າຫ້ອງ ພັກເປ່ເພ, ຄ່ານ້ຳ, ຄ່າໄຟ ແລະ ອື່ນໆ ຂອງ **ກ** ໃນໄລຍະທີ່ເຊົ່າຢູ່ນັ້ນ (ຖ້າ ມີ), ແຕ່ຖ້າ **ກ** ຫາກໄດ້ປະຕິບັດພັນທະຂອງຕົນຄົບຖ້ວນແລ້ວ ພາຍຫຼັງ ສິ້ນສຸດສັນຍາ ເງິນມັດຈຳ ຈຳນວນ 500.000 ກີບ ຈະຖືກສົ່ງຄືນໃຫ້ **ກ**.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງຂຶ້ນໃໝ່ ເພື່ອໃຫ້ສອດຄ່ອງກັບສະພາບຕົວຈິງ ຂອງສັງຄົມ ປັດຈຸບັນ ແລະ ກົດໝາຍ ທັງເປັນການແກ້ໄຂບັນຫາທີ່ເກີດຂຶ້ນໃນສັງຄົມ ປັດຈຸບັນ.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງຂອງປະເທດອື່ນ	ມາດຕາ 377, 378 ຂອງປະມວນກົດໝາຍແພ່ງ ແລະ ພານິດໄທ; ມາດຕາ 336, 337 ຂອງປະມວນກົດໝາຍແພ່ງເຢຍລະມັນ; ມາດຕາ 557 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 378, 379, 380, 382, 388 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 390 ການປັບໃໝ

ການປັບໃໝ ແມ່ນ ມາດຕະການຕໍ່ຜູ້ບໍ່ປະຕິບັດສັນຍາ.

ການປັບໃໝ ໃຫ້ປະຕິບັດຕາມການຕົກລົງຂອງຄູ່ສັນຍາ ໂດຍບໍ່ຂັດກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ກ່ຽວກັບ ການປົກປ້ອງຄູ່ສັນຍາ ຝ່າຍທີ່ໄດ້ຮັບຄວາມອັບປະໂຫຍດຈາກການບໍ່ປະຕິບັດສັນຍາ.
ຕົວຢ່າງ	**1. ກ** ກູ້ຍືມເງິນ 35.000.000 ກີບ ກັບ ທະນາຄານ **ຂ** ໃນໄລຍະເວລາ ຫ້າປີ (ຫົກສິບ ເດືອນ) ໂດຍມີການຄິດໄລ່ດອກເບ້ຍແບບຫຼຸດຜ່ອນ ຄື 14% ຕໍ່ປີ ແລະ ການຊຳລະແມ່ນເປັນແຕ່ລະເດືອນ (ຕົ້ນທຶນທີ່ຍັງເຫຼືອຕົວຈິງ + ດອກເບ້ຍປົກກະຕິ). ກໍລະນີ **ກ** ມີການຊຳລະຊ້າ ຫຼື ມີການຄ້າງຊຳລະດອກເບ້ຍ ຫຼື ຕົ້ນທຶນ (ທັງໝົດ ຫຼື ບາງສ່ວນ) ເລີ່ມແຕ່ ເກົ້າສິບ ວັນຂຶ້ນໄປ ທະນາຄານຈະຄິດໄລ່ 150% ຂອງອັດຕາດອກເບ້ຍ 14% ຕໍ່ປີ ຈົນກວ່າ **ກ** ຈະຊຳລະໜີ້ສິນ ໝົດ. ກໍລະນີ **ກ** ຍັງໜີ້ຄ້າງຕົ້ນທຶນ 20.000.000 ກີບ ແລະ ເກົ້າສິບ ວັນ (ຮອດມື້ຄິດໄລ່). <u>ການຄິດໄລ່ດອກເບ້ຍປົກກະຕິ ແລະ ດອກເບ້ຍປັບໃໝ ມີດັ່ງນີ້ :</u> ດອກເບ້ຍປົກກະຕິທີ່ຕ້ອງຊຳລະ(ຄິດໄລ່ເປັນວັນ) = ຕົ້ນທຶນທີ່ຍັງເຫຼືອ x ອັດຕາດອກເບ້ຍປົກະຕິ/360 ວັນ, 20.000.000 x 14%/360 = 7.777 ກີບ (ໝາຍຄວາມວ່າ ກ ຕອນນີ້ມີໜີ້ຕົ້ນທຶນຕ້ອງສົ່ງຈຳນວນ 20.000.000 ກີບ ຕ້ອງຊຳລະດອກເບ້ຍປົກກະຕິ 7.777 ກີບ ຕໍ່ວັນ) ດອກເບ້ຍປັບໃໝ = ດອກເບ້ຍປົກກະຕິ x 150% 14% x 150% = 21% ຈຳນວນເງິນປັບໃໝ = ຈຳນວນເງິນຄ້າງຊຳລະ x ຈຳນວນວັນຄ້າງຊຳລະ x ອັດຕາປັບໃໝ/360 ວັນ 20.000.000 x 90 ວັນ x 21% / 360 = 1.050.000 ກີບ/ ວັນ. ຄ້າງຈ່າຍ 90 ວັນ = 1.050.000 x 90 ວັນ = 94.500.000 ກີບ. ຈຳນວນເງິນປັບໃໝ ທັງໝົດ ແມ່ນ 94.500.000 ກີບ ໃນກໍລະນີນີ້ ການກຳນົດເງິນປັບໃໝຂອງຄູ່ສັນຍາ ແມ່ນກຳນົດສອດຄ່ອງຕາມຂໍ້ຕົກລົງຂອງທະນາຄານແຫ່ງ ສປປ ລາວ ວ່າດ້ວຍ ວິທີການຄິດໄລ່ດອກເບ້ຍເງິນໃຫ້ກູ້ຍືມ ແລະ ການປັບໃໝຂອງທະນາຄານທຸລະກິດ ສະບັບເລກທີ 361/ທຫລ,ລົງວັນທີ 24 ເມສາ 2012. **2. ກ** ກູ້ຍືມເງິນນຳ ທະນາຄານ **ຂ** ຈຳນວນ 10.000.000 ກີບ ດອກເບ້ຍ 2% ຕໍ່ເດືອນ, ກຳນົດເວລາ ໜຶ່ງປີ, ທັງສອງຝ່າຍ ໄດ້ຕົກລົງກັນວ່າ ພາຍໃນເວລາ ໜຶ່ງປີ **ກ** ຕ້ອງຊຳລະໜີ້ທັງຕົ້ນທຶນ ແລະ ດອກເບ້ຍ ທັງໝົດ, ຖ້າ ຮອດກຳນົດເວລາ **ກ** ບໍ່ສາມາດຊຳລະໜີ້ທັງໝົດໄດ້ **ກ** ຈະເສຍດອກເບ້ຍປັບໃໝ 30% ຕໍ່ເດືອນ. ໃນກໍລະນີນີ້ເຫັນວ່າ ການຕົກລົງລະຫວ່າງ **ກ** ແລະ **ຂ** ກ່ຽວກັບດອກເບ້ຍປັບໃໝ ຂັດກັບຂໍ້ຕົກລົງຂອງທະນາຄານແຫ່ງ

	ສປປ ລາວ ວ່າດ້ວຍ ວິທີການຄິດໄລ່ດອກເບ້ຍເງິນໃຫ້ກູ້ຢືມ ແລະ ການປັບໃໝຂອງທະນາຄານທຸລະກິດ ສະບັບເລກທີ 361/ທຫລ, ລົງວັນທີ 24 ເມສາ 2012 ມາດຕາ 4 ການປັບໃໝ (ວິທີຄິດໄລ່ດອກເບ້ຍ ແລະ ການປັບໃໝ ທີ່ກຳນົດໃຫ້ສາມາດຄິດໄລ່ດອກປັບໃໝໄດ້ ແຕ່ບໍ່ໃຫ້ເກີນ 150 ເປີເຊັນຂອງດອກເບ້ຍປົກກະຕິ).
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກເນື້ອໃນມາດຕາ 36 ການປັບໃໝ ຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ປີ 2008, ໂດຍໄດ້ນິຍາມການປັບໃໝ ເພື່ອໃຫ້ສອດຄ່ອງກັບມາດຕາ 388 ແລະ ສະພາບຕົວຈິງຂອງສັງຄົມເພື່ອປົກປ້ອງຄູ່ສັນຍາ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 420 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ;
ມາດຕາອ້າງອີງ	ມາດຕາ 378, 379, 388, 389 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ໝວດທີ 6
ການບໍ່ປະຕິບັດສັນຍາ

ມາດຕາ 391 ການບໍ່ປະຕິບັດສັນຍາ

ການບໍ່ປະຕິບັດສັນຍາ ແມ່ນ ການລະເມີດສັນຍາທັງໝົດ ຫຼື ບາງສ່ວນ ຫຼື ການປະຕິບັດສັນຍາ ໂດຍບໍ່ສົມເຫດສົມຜົນຂອງຄູ່ສັນຍາຝ່າຍໃດໜຶ່ງ ເຊັ່ນ ການປະຕິບັດສັນຍາ ບໍ່ມີຄຸນນະພາບ, ບໍ່ທັນກັບເວລາ, ບໍ່ຖືກສະຖານທີ່.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ກ່ຽວກັບ ນິຍາມ ແລະ ຈຸດພິເສດຂອງການບໍ່ປະ ຕິບັດສັນຍາ ໂດຍການຍົກຕົວຢ່າງຂອງການບໍ່ປະຕິບັດສັນຍາ.
ຕົວຢ່າງ	**1. ການປະຕິບັດສັນຍາທັງໝົດ ຫຼື ບາງສ່ວນ** - **ກ** ເຮັດສັນຍາຊື້ຂາຍເຂົ້າຫອມມະລິລາວ ກັບ **ຂ** ໃນວັນທີ 15 ພະຈິກ 2017 ຈຳນວນ 1 ໂຕນ ລາຄາ 3.0000.000 ກີບ ກຳນົດສົ່ງວັນທີ 15 ທັນວາ 2017, ແຕ່ຍັງບໍ່ຮອດກຳນົດເວລາ **ຂ** ປະຕິເສດບໍ່ສາມາດສົ່ງເຂົ້າຫອມມະລິລາວໃຫ້ **ກ** ໄດ້ ເຫດຜົນຍ້ອນວ່າ ລາຄາເຂົ້າແມ່ນມີມູນຄ່າສູງກວ່າລາຄາເດີມ 1 ໂຕນ ລາຄາ 4.000.000 ກີບ ເຫັນວ່າ **ຂ** ເປັນຜູ້ບໍ່ປະຕິບັດສັນຍາທັງໝົດ. - **ກ** ເຮັດສັນຍາຊື້ - ຂາຍເຂົ້າຫອມມະລິລາວ ກັບ **ຂ** ເປັນຈຳນວນ 1 ໂຕນ, ໃນວັນທີ 15 ພະຈິກ 2017 ໃຫ້ **ຂ** ຕ້ອງສົ່ງເຂົ້າເຖິງ **ກ**, ແຕ່ຮອດວັນທີ 14 ພະຈິກ 2017, **ຂ** ສົ່ງເຂົ້າຫອມມະລິລາວໃຫ້ **ກ** ໄດ້ພຽງແຕ່ 100 ກິໂລ ເທົ່ານັ້ນ ສະແດງວ່າ **ຂ** ເປັນຜູ້ປະຕິບັດສັນຍາບາງສ່ວນ; **2. ການປະຕິບັດສັນຍາ ບໍ່ມີຄຸນນະພາບ** **ກ** ເຮັດສັນຍາຊື້ - ຂາຍເຂົ້າຫອມມະລິລາວ ກັບ **ຂ** ເປັນຈຳນວນ 1 ໂຕນ, ໃນວັນທີ 15 ພະຈິກ 2017 ໃຫ້ **ຂ** ຕ້ອງສົ່ງເຂົ້າເຖິງ **ກ**, ແຕ່ຮອດວັນທີ 14 ພະຈິກ 2017, **ຂ** ສົ່ງເຂົ້າຫອມມະລິລາວໃຫ້ **ກ** ໄດ້ພຽງແຕ່ 100 ກິໂລ ເທົ່ານັ້ນ ສະແດງວ່າ **ຂ** ເປັນຜູ້ປະຕິບັດສັນຍາບາງສ່ວນ;

	3. ກໍລະນີການປະຕິບັດບໍ່ທັນກັບເວລາ **ກ** ເຮັດສັນຍາຊື້ຂາຍເຂົ້າຫອມມະລິລາວ ກັບ **ຂ** ໃນວັນທີ 15 ພະຈິກ 2017 ຈຳນວນ 1 ໂຕນ ລາຄາ 3.0000.000 ກີບ ກຳນົດສົ່ງວັນທີ 15 ທັນວາ 2017, ແຕ່ຍັງບໍ່ຮອດກຳນົດເວລາ **ຂ** ປະຕິເສດບໍ່ສາມາດສົ່ງເຂົ້າຫອມມະລິລາວໃຫ້ **ກ** ໄດ້ ເຫດຜົນຍ້ອນວ່າ ລາຄາເຂົ້າແມ່ນມີມູນຄ່າສູງກວ່າລາຄາເດີມ 1 ໂຕນ ລາຄາ 4.000.000 ກີບ ເຫັນວ່າ **ຂ** ເປັນຜູ້ບໍ່ປະຕິບັດສັນຍາ ທັງໝົດ. **4. ກ** ເຮັດສັນຍາຊື້ຂາຍເຂົ້າຫອມມະລິລາວເກຣດ A ກັບ **ຂ** ໃນລາຄາ 3.000.000 ກີບຕໍ່ 1 ໂຕນ, ໃນວັນທີ 15 ພະຈິກ 2017 ໃຫ້ **ຂ** ຕ້ອງສົ່ງເຂົ້າໃຫ້ **ກ**, ແຕ່ຮອດວັນທີ 14 ພະຈິກ 2017 **ຂ** ສົ່ງເຂົ້າຫອມມະລິລາວເກຣດ B ໃຫ້ **ກ** , ຊຶ່ງຄຸນນະພາບຂອງເຂົ້າຫອມມະລິບໍ່ຄືກັນກັບເຂົ້າທີ່ສັ່ງຊື້ຕາມສັນຍາ ການປະຕິບັດຂອງ **ຂ** ແມ່ນບໍ່ມີຄຸນນະພາບ. **5. ກ** ເຮັດສັນຍາຊື້ຂາຍເຂົ້າຫອມມະລິລາວ ກັບ **ຂ** ເປັນຈຳນວນ 1 ໂຕນ, ໃນວັນທີ 15 ພະຈິກ 2017 ໃຫ້ **ຂ** ຕ້ອງສົ່ງເຂົ້າໃຫ້ **ກ**, ແຕ່ຮອດວັນທີ 15 ທັນວາ 2017, **ຂ** ບໍ່ສາມາດ ສົ່ງເຂົ້າຫອມມະລິລາວ ໃຫ້ **ກ** ຕາມກຳນົດເວລາໄດ້ ເຫັນວ່າ ການປະຕິບັດຂອງ **ຂ** ແມ່ນບໍ່ທັນເວລາ. **6. ກ** ເຮັດສັນຍາຊື້ຂາຍເຂົ້າຫອມມະລິລາວເກຣດ A ກັບ **ຂ** ໃນລາຄາ 3.000.000 ກີບຕໍ່ 1 ໂຕນ, ໃນວັນທີ 15 ພະຈິກ 2017 ໃຫ້ **ຂ** ຕ້ອງສົ່ງເຂົ້າໃຫ້ **ກ** ຢູ່ຮ້ານຂາຍເຂົ້າຂອງ **ກ**, ແຕ່ຮອດວັນທີ 14 ພະຈິກ 2017 **ຂ** ໄດ້ເອົາເຂົ້າຫອມມະລິໄປສົ່ງໃຫ້ຢູ່ເຮືອນຂອງ **ກ**.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກມາດຕາ 33 ຜົນສະທ້ອນຂອງການລະເມີດສັນຍາ ຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ປີ 2008, ຊຶ່ງກາຍມາເປັນ ມາດຕາ 391 ປະມວນກົດໝາຍແພ່ງ, ມາດຕາ 33 ກຳນົດວ່າ "**ຖ້າຄູ່ສັນຍາຝ່າຍໃດໜຶ່ງຫາກບໍ່ປະຕິບັດຕາມສັນຍາ ຫຼື ການປະຕິບັດສັນຍາທີ່ບໍ່ມີຄຸນນະພາບແມ່ນນຳໃຊ້ມາດຕານີ້ ເພື່ອເປັນບ່ອນອີງໃນການແກ້ໄຂບັນຫາທີ່ເກີດຂຶ້ນ**". ມາດຕາດັ່ງກ່າວສ່ວນໃຫຍ່ແມ່ນຮັກສາເນື້ອໃນເດີມ,ແຕ່ມີການປັບປຸງຄຳເວົ້າໃຫ້ມີຄວາມຊັດເຈນ, ເປັນລະບົບເພື່ອໃຫ້ຜູ້ສຶກສາກົດໝາຍມີຄວາມເຂົ້າໃຈງ່າຍ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 407, 392, 393, 394 ແລະ 395 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 392 ຜົນສະທ້ອນຂອງການບໍ່ປະຕິບັດສັນຍາ

ຖ້າຄູ່ສັນຍາຝ່າຍໃດໜຶ່ງ ຫາກບໍ່ປະຕິບັດສັນຍາ ຝ່າຍທີ່ຖືກລະເມີດມີສິດທອງໃຫ້ປະຕິບັດສັນຍາ, ໃຊ້ແທນຄວາມເສຍຫາຍ ຫຼື ຍົກເລີກສັນຍາ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ກ່ຽວກັບ ຜົນສະທ້ອນຂອງການບໍ່ປະຕິບັດສັນຍາ ຊຶ່ງຄູ່ສັນຍາຝ່າຍທີ່ຖືກລະເມີດສິດ ແລະ ຜົນປະໂຫຍຈາກການບໍ່ປະຕິບັດສັນຍາ ສາມາດປົກປ້ອງຜົນປະໂຫຍດຂອງຕົນ ໂດຍການທວງໃຫ້ອີກຝ່າຍໜຶ່ງປະຕິບັດສັນຍາ, ໃຊ້ແທນຄວາມເສຍຫາຍ ຫຼື ຍົກເລີກສັນຍາ.

ຕົວຢ່າງ	**1.** **ກ** ເຮັດສັນຍາ ຮັບເໝົາກໍ່ສ້າງໂຮງແຮມ 1 ຫຼັງ ກັບ **ຂ** (ເຈົ້າຂອງໂຮງແຮມ) ໄລຍະເວລາເລີ່ມແຕ່ 1 ມັງກອນ 2016 ຫາ 1 ມັງກອນ 2019 ກຳນົດເວລາ 3 ປີ, **ກ** ບໍ່ສາມາດດຳເນີນການກໍ່ສ້າງໂຮງແຮມສຳເລັດຕາມສັນຍາ, ເຮັດໃຫ້ **ຂ** ມີຄວາມເສຍຫາຍເນື່ອງຈາກການແກ່ຍາວເວລາອອກໄປ, ດັ່ງນັ້ນ, **ຂ** ສາມາດທວງໃຫ້ **ກ** ໃຊ້ແທນຄ່າເສຍຫາຍທີ່ເກີດຂຶ້ນຈາກການລະເມີດສັນຍາຮັບເໝົາກໍ່ສ້າງນັ້ນ. **2.** **ກ** ເຮັດສັນຍາກູ້ຢືມເງິນ ກັບ **ຂ** ຈຳນວນເງິນ 20.000.000 ກີບ ດອກເບ້ຍ 3% ຕໍ່ເດືອນ ກຳນົດເວລາ ໜຶ່ງປີ, ຕໍ່ມາ **ກ** ປະຕິບັດດອກເບ້ຍໄດ້ພຽງແຕ່ສາມ ເດືອນ, ຕໍ່ມາຜູ້ກ່ຽວບໍ່ສາມາດປະຕິບັດໃນກໍລະນີນີ້ **ຂ** ມີສິດທວງໃຫ້ **ກ** ປະຕິບັດສັນຍາ. ໃນກໍລະນີ **ກ** ບໍ່ສາມາດປະຕິບັດ **ຂ** ຍັງມີສິດຍົກເລີກສັນຍາ ແລະ ທວງເອົາຕົ້ນທຶນ ແລະ ດອກເບ້ຍທັງໝົດທີ່ຍັງຄ້າງຈົນກ່ວາປະຕິບັດສຳເລັດ. 3. ກະລຸນາເບິ່ງຕົວຢ່າງ ມາດຕາ 393 ຫາ 395 ຂອງປະມວນກົດໝາຍແພ່ງ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 33 ວັກ 2 ຜົນສະທ້ອນຂອງການລະເມີດສັນຍາ ຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ປີ 2008, ເນື່ອງຈາກວ່າ ມາດຕາ 33 ນັ້ນກຳນົດຄຳນິຍາມຂອງການລະເມີດ ແລະຜົນສະທ້ອນຂອງການລະເມີດຢູ່ໃນມາດຕາດຽວເຊິ່ງມັນບໍ່ມີຄວາມຊັດເຈນ ແລະ ຈະແຈ້ງ ດັ່ງນັ້ນ, ຈຶ່ງແຍກເນື້ອໃນທີ່ກ່ຽວຂ້ອງຜົນຂອງການລະເມີດສັນຍາອອກເປັນມາດຕານີ້ ສ່ວນຄວາມໝາຍຂອງການລະເມີດສັນຍາແມ່ນກຳນົດໄວ້ໃນ ມາດຕາ 391.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 414, 415, 416 (ຜົນການບໍ່ປະຕິບັດສັນຍາ) ຂອງປະມວນກົດໝາຍແພ່ງຍີ່ປຸ່ນ; ມາດຕາ 541, 542, 543 (ການຍົກເລີກສັນຍາ) ຂອງປະມວນກົດໝາຍແພ່ງຍີ່ປຸ່ນ; ມາດຕາ 562, 563, 564 (ກໍລະນີສັນຍາຊື້-ຂາຍ) ແລະ 559 (ກໍລະນີສັນຍາຊື້-ຂາຍ ແຕ່ສາມາດນຳໃຊ້ໃນກໍລະນີສັນຍາທີ່ມີການຈ່າຍຄ່າຕອບແທນ) ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 391, 393, 394 ແລະ 395 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 393 ການທວງໃຫ້ປະຕິບັດສັນຍາ

ສັນຍາທີ່ມີຜົນບັງຄັບຕໍ່ຄູ່ສັນຍາແລ້ວ ຕ້ອງນຳມາປະຕິບັດຕາມເນື້ອໃນທີ່ໄດ້ຕົກລົງກັນຢ່າງເຂັ້ມງວດ. ຖ້າຄູ່ສັນຍາຝ່າຍໃດໜຶ່ງ ຫາກບໍ່ປະຕິບັດ, ອີກຝ່າຍໜຶ່ງ ກໍມີສິດທວງໃຫ້ຝ່າຍນັ້ນ ປະຕິບັດ ຫຼື ຮ້ອງຟ້ອງຕໍ່ສານ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ກ່ຽວກັບການຕົກລົງເນື້ອໃນໄວ້ຢູ່ໃນສັນຍາແມ່ນມີຜົນທາງດ້ານກົດໝາຍ, ຝ່າຍທີ່ຖືກລະເມີດສາມາດທວງໃຫ້ອີກຝ່າຍປະຕິບັດສັນຍາໄດ້.
ຕົວຢ່າງ	**ກ** ເຮັດສັນຍາກູ້ຢືມເງິນຈາກ **ຂ** ໃນຈຳນວນ 20.000.000 ກີບ ກຳນົດສາມ ເດືອນ ດອກເບ້ຍ 3 % ຕໍ່ ເດືອນ ເລີ່ມແຕ່ ວັນທີ 1 ມີນາ 2016 ຫາ 1 ມິຖຸນາ 2016. ເມື່ອຮອດ ວັນທີ 1 ມິຖຸນາ 2016 **ຂ** ບໍ່ສາມາດສົ່ງເງິນ

	ພ້ອມດອກເບ້ຍສົ່ງຄືນໃຫ້ **ກ** ໄດ້, **ກ** ຈຶ່ງທວງໃຫ້ **ຂ** ປະຕິບັດຕາມສັນຍາໄດ້ ໂດຍກົງ ກໍລະນີທີ່ **ຂ** ຫາກບໍ່ໃຊ້ແທນຕົ້ນທຶນ ແລະ ດອກເບ້ຍໃຫ້ແກ່ **ກ**, **ກ** ສາມາດຮ້ອງຟ້ອງຕໍ່ **ຂ** ຕາມລະບຽບກົດໝາຍ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງຂຶ້ນໃໝ່ ເນື່ອງຈາກກົດໝາຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ສະບັບປີ 2008, ບໍ່ໄດ້ກຳນົດກ່ຽວກັບການທວງໃຫ້ປະຕິບັດສັນຍາໄວ້. ດັ່ງນັ້ນ, ການກຳນົດມາດຕາດັ່ງກ່າວເຮັດໃຫ້ກົດໝາຍລາວມີຄວາມທັນສະໄໝ ທຽບທັນສາກົນ, ພ້ອມທັງສອດຄ່ອງກັບສະພາບຕົວຈິງທີ່ເກີດຂຶ້ນໃນສັງຄົມ ລາວ ແລະ ເປັນການຍົກສູງສະຕິກົດໝາຍຂອງຜູ້ເຂົ້າໃນການເຮັດເຮັດສັນຍາ ຕ່າງໆຫາການມີການຕົກລົງກັນແລ້ວ.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງຂອງປະເທດອື່ນ	ມາດຕາ 163 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ປີ 2012; ມາດຕາ 213 ຂອງປະມວນກົດໝາຍແພ່ງ ແລະ ພານິດໄທ; ມາດຕາ 414 ຂອງປະມວຍກົດໝາຍແພ່ງຍີ່ປຸ່ນ; ມາດຕາ 409, 410 ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2015.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 394 ການໃຊ້ແທນຄວາມເສຍຫາຍ

ຖ້າຄູ່ສັນຍາຝ່າຍໃດໜຶ່ງ ຫາກບໍ່ປະຕິບັດສັນຍາ ຝ່າຍນັ້ນ ຕ້ອງຮັບຜິດຊອບໃຊ້ແທນຄວາມ ເສຍຫາຍທີ່ເກີດຂຶ້ນ, ເວັ້ນເສຍແຕ່ການລະເມີດສັນຍານັ້ນ ຫາກເກີດຂຶ້ນຍ້ອນເຫດສຸດວິໄສ.

ການຄິດໄລ່ຄ່າເສຍຫາຍ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນມາດຕາ 481 ຂອງປະມວນ ກົດໝາຍສະບັບນີ້.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ກ່ຽວກັບຜົນຂອງການບໍ່ປະຕິບັດສັນຍາ ທີ່ກໍ່ໃຫ້ເກີດຄວາມ ເສຍຫາຍ ຄູ່ສັນຍາຝ່າຍທີ່ໄດ້ຮັບຄວາມເສຍຫາຍ ສາມາດທວງເອົາການໃຊ້ ແທນຄວາມເສຍຫາຍ ຈາກຄູ່ສັນຍາອີກຝ່າຍໜຶ່ງ ຕາມເງື່ອນໄຂຂອງການບໍ່ ປະຕິບັດສັນຍາ ແລະ ວິທີການຄິດໄລ່ຄ່າເສຍຫາຍນັ້ນ.
ຕົວຢ່າງ	ສັນຍາຮັບເໝົາກໍ່ສ້າງ ໂຮງແຮມ 1 ຫຼັງ **ກ** ເປັນເຈົ້າຂອງໂຮງແຮມ **ຂ** ເປັນຝ່າຍ ຮັບເໝົາກໍ່ສ້າງ ກຳນົດເວລາ ສາມປີ ເມື່ອເຖິງກຳນົດເວລາແລ້ວ **ຂ** ບໍ່ສາມາດ ກໍ່ສ້າງໂຮງແຮມໃຫ້ ສຳເລັດໄດ້ ຊຶ່ງ **ກ** ໄດ້ຕົກລົງຈ້າງຜູ້ໃໝ່ ມາກໍ່ສ້າງ ແລະ ໄດ້ ໃຊ້ຈ່າຍເງິນຂອງຕົນ ຊຶ່ງເກີດຈາກ **ຂ** ບໍ່ປະຕິບັດຕາມສັນຍາ **ກ** ຈຶ່ງຮ້ອງຟ້ອງຕໍ່ ສານຮຽກຮ້ອງເອົາຄ່າເສຍຫາຍນຳ **ຂ** ຊຶ່ງເຮັດໃຫ້ **ກ** ໄດ້ເສຍເວລາ, ຄ່າຈ້າງຜູ້ຮັບ ເໝົາທີ່ແພງຂຶ້ນ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງໃໝ່ ເນື່ອງຈາກວ່າມາດຕາ 33 ຜົນສະທ້ອນຂອງການລະເມີດ ສັນຍາ ວັກ 2 ຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ປີ 2008, ສ້າງໃໝ່ໃຫ້ການໃຊ້ແທນຄ່າເສຍຫາຍມີຄວາມສອດຄ່ອງກັບສະພາບ ຕົວຈິງ, ກົດໝາຍຕ່າງປະເທດ ແລະ ມີເລືອງຕົວຈິງໃນສັງຄົມລາວ.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງຂອງປະເທດອື່ນ	ມາດຕາ 215, 217,218 ແລະ 219 ຂອງປະມວນກົດໝາຍແພ່ງ ແລະ ພານິດ ໄທ; ມາດຕາ 415 ແລະ 416 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ; ມາດຕາ 413 ແລະ 419 ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2015.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 395 ການຍົກເລີກເນື່ອງຈາກການບໍ່ປະຕິບັດສັນຍາ

ໃນກໍລະນີທີ່ມີການລະເມີດເນື້ອໃນສຳຄັນຂອງສັນຍາ, ຄູ່ສັນຍາຝ່າຍທີ່ໄດ້ຮັບຄວາມອັບປະໂຫຍດ ຈະຍົກເລີກສັນຍາແຕ່ຝ່າຍດຽວກໍໄດ້, ເວັ້ນເສຍແຕ່ຄູ່ສັນຍາຫາກໄດ້ຕົກລົງກັນໄວ້ເປັນຢ່າງອື່ນ

ຜູ້ທີ່ມີສິດຍົກເລີກສັນຍາ ຕ້ອງແຈ້ງການຍົກເລີກສັນຍາໃຫ້ອີກຝ່າຍໜຶ່ງຊາບ.

ການຍົກເລີກສັນຍາທີ່ເປັນລາຍລັກອັກສອນ ຕ້ອງເຮັດເປັນລາຍລັກອັກສອນ.

ເມື່ອສັນຍາຫາກຖືກຍົກເລີກແລ້ວ, ສິ່ງທີ່ໄດ້ປະຕິບັດຕໍ່ກັນຜ່ານມາ ກໍໃຫ້ແລ້ວກັນໄປ. ຖ້າຝ່າຍໜຶ່ງ ຫາກໄດ້ປະຕິບັດພັນທະຂອງຕົນກ່ອນແລ້ວ, ຝ່າຍທີ່ຍັງຄ້າງຄານັ້ນ ຕ້ອງໄດ້ປະຕິບັດຕອບແທນ. ສຳລັບ ພັນທະທີ່ຍັງບໍ່ທັນໄດ້ປະຕິບັດຕໍ່ກັນນັ້ນ ກໍໃຫ້ເລີກແລ້ວກັນໄປ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ກ່ຽວກັບ ຄູ່ສັນຍາຝ່າຍ ທີ່ໄດ້ຮັບຄວາມອັບປະໂຫຍດຈາກການ ບໍ່ປະຕິບັດສັນຍາ ສາມາດອອກຈາກພັນທະຕາມສັນຍາໄດ້.
ຕົວຢ່າງ	1. **ກ** ແລະ **ຂ** ໄດ້ເຮັດສັນຍາຊື້ຂາຍເຄື່ອງຄອມພິວເຕີ ຈຳນວນ 10 ເຄື່ອງ ພ້ອມດ້ວຍ ແປ້ນພິມ ແລະ ເມົ້າ ຈຳນວນ 10 ຊຸດ, ແຕ່ໃນເວລາ **ຂ** ສົ່ງ ເຄື່ອງໃຫ້ **ກ** ນັ້ນ ບໍ່ມີແປ້ນພິມ ແລະ ເມົ້າ ຕິດມານຳຄອມພິວເຕີ້ຊຸດດັ່ງ ກ່າວ, ດັ່ງນັ້ນ **ກ** ຈຶ່ງທວງເອົາແປ້ນພິມ ແລະ ເມົ້າ ນຳ **ຂ** ແຕ່ **ຂ** ປະຕິເສດ. ກໍລະນີນີ້ **ກ** ສາມາດຍົກເລີກສັນຍາດັ່ງກ່າວໄດ້ ເນື່ອງຈາກວ່າ **ຂ** ລະເມີດ ສັນຍາຊື້ຂາຍທີ່ໄດ້ຕົກລົງກັນ, ຖ້າຂາດແປ້ນພິມ ແລະ ເມົ້າ ຄອມພິວເຕີ້ນັ້ນ ຈະບໍ່ສາມາດນຳໃຊ້ໄດ້ ອັນໄດ້ສ້າງຄວາມອັບປະໂຫຍດໃນການດຳເນີນທຸກິ ດຂອງ **ກ** ແລະ ຍັງຈະຖືກປັບໃໝ. 2. **ກ** ເຮັດສັນຍາເຊົ່າເຮືອນ **ຂ** ໄລຍະເວລາ ສອງປີ ໂດຍ **ກ** ໄດ້ຈ່າຍຄ່າເຊົ່າ ກ່ອນລ່ວງໜ້າ ໜຶ່ງປີ, **ກ** ອາໄສຢູ່ມາໄດ້ຫົກເດືອນແລ້ວ ເຮືອນຫຼັງດັ່ງກ່າວ ໄດ້ຖືກລົມພາຍຸພັດເຮັດໃຫ້ຫຼັງຄາເສຍຫາຍ, ຕໍ່ກັບເຫດການດັ່ງກ່າວ **ກ** ໄດ້ ແຈ້ງເປັນລາຍລັກອັກສອນໃຫ້ **ຂ** ມາສ້ອມແປງ ແຕ່ **ຂ** ບໍ່ສ້ອມແປງ, ຍ້ອນ ແນວນັ້ນ **ກ** ຈຶ່ງໄດ້ຮັບຄວາມອັບປະໂຫຍດ ຈຶ່ງຍົກເລີກສັນຍາເຊົ່າເຮືອນ ຝ່າຍດຽວ, ເມື່ອ **ກ** ຍົກເລີກສັນຍາເຊົ່າແລ້ວ ເງິນຄ່າເຊົ່າເຮືອນຫົກເດືອນກໍ ໃຫ້ແລ້ວກັນໄປ ສ່ວນເງິນທີ່ຍັງເຫຼືອຫົກເດືອນທີ່ **ກ** ບໍ່ໄດ້ຢູ່ອາໄສເຮືອນດັ່ງ ກ່າວນັ້ນ **ຂ** ຕ້ອງໄດ້ສົ່ງເງິນຄືນ, ສ່ວນສັນຍາເຊົ່າທີ່ຍັງເຫຼືອອີກ ໜຶ່ງປີນັ້ນ ກໍ ໃຫ້ແລ້ວກັນໄປ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 37 ວັກ 2 ການປ່ຽນແປງ ຫຼື ການຍົກເລີກ ສັນຍາ ຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ປີ 2008, ຊຶ່ງໄດ້ແຍກອອກມາອະທິບາຍກ່ຽວກັບການຍົກເລີກສັນຍາ ເນື່ອງຈາກການບໍ່ ປະຕິບັດສັນຍາ ໃຫ້ມີຄວາມຊັດເຈນຂຶ້ນ. ກົດໝາຍ ວ່າດ້ວຍ ຂໍ້ຜູກພັນໃນ ແລະ ນອກສັນຍາ ປີ 2008 ມາດຕາ 37 ວັກ 2 ໄດ້ກຳນົດວ່າ: ໃນກໍລະນີທີ່ມີການລະເມີດສັນຍາ ຄູ່ສັນຍາຝ່າຍທີ່ໄດ້ຮັບຄວາມອັບປະໂຫຍດ ນັ້ນ ຈະປ່ຽນແປງ ຫຼື ຍົກເລີກ ສັນຍາ ແຕ່ຝ່າຍດຽວກໍໄດ້. ແຕ່ໃນປະມວນກົດໝາຍແພ່ງ ໝາຍຕາ 395 ວັກ 1 ໄດ້ກຳນົດວ່າ: "**ໃນກໍລະນີ ທີ່ມີການລະເມີດເນື້ອໃນສຳຄັນຂອງສັນຍາ, ຄູ່ສັນຍາຝ່າຍທີ່ໄດ້ຮັບ ຄວາມອັບປະໂຫຍດ ຈະຍົກເລີກສັນຍາແຕ່ຝ່າຍດຽວກໍໄດ້**".

	ອີງຕາມປະມວນກົດໝາຍແພ່ງ ຄູ່ສັນຍາທີ່ຖືກອັບປະໂຫຍດຈະສາມາດຍົກເລີກສັນຍາແຕ່ຝ່າຍດຽວໄດ້ ກໍຕໍ່ເມື່ອຝ່າຍທີ່ບໍ່ປະຕິສັນຍານັ້ນໄດ້ລະເມີດເນື້ອໃນສຳຄັນຂອງສັນຍາດັ່ງກ່າວເທົ່ານັ້ນ ໂດຍທີ່ບໍ່ແມ່ນພຽງແຕ່ເປັນການລະເມີດໂດຍທົ່ວໄປ. ເຫດຜົນທີ່ກຳນົດແນວນັ້ນກໍຄື ເພື່ອເປັນການຍົກສູງຄວາມສຳຄັນຂອງສັນຍາທີ່ໄດ້ເຮັດຂຶ້ນມາແລ້ວ ແລະ ພະຍາຍາມໃຫ້ໄດ້ຖືກຈັດຕັ້ງປະຕິບັດ. ສະນັ້ນ, ການທີ່ຈະຮູ້ໄດ້ວ່າເນື້ອໃນໃດເປັນເນື້ອໃນສຳຄັນ ຂອງສັນຍາ ຫຼື ບໍ່ນັ້ນ ແມ່ນໃຫ້ເບິ່ງວ່າຖ້າມີການລະເມີດເນື້ອໃນດັ່ງກ່າວແລ້ວຈະເຮັດໃຫ້ບໍ່ສາມາດບັນລຸວັດຖຸປະສົງຂອງສັນຍາໄດ້ ໂດຍຄຳນຶງເຖິງລະດັບຂອງການອັບປະໂຫຍດ. ເພາະວ່າ ເມື່ອມີການລະເມີດເນື້ອໃນດັ່ງກ່າວແລ້ວເຮັດໃຫ້ວັດຖຸປະສົງຂອງສັນຍາບໍ່ສາມາດບັນລຸໄດ້ ກໍໝາຍຄວາມວ່າຄູ່ສັນຍາບໍ່ຈຳເປັນຈະຕ້ອງຖືກຜູກມັດໂດຍສັນຍາດັ່ງກ່າວອີກຕໍ່ໄປ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 407 ຂອງປະມວນກົດໝາຍແພ່ງກຳປູເຈຍ; ມາດຕາ 386,387,388,389 ແລະ 391 ຂອງປະມວນກົດໝາຍແພ່ງ ແລະ ພານິດໄທ; ມາດຕາ 540 ຫາ 545 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ; ມາດຕາ 423 ຫາ 427 ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2015;
ມາດຕາອ້າງອີງ	ມາດຕາ 391, 392 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 396 ສິດດຳເນີນການແທນລູກໜີ້

ໃນກໍລະນີທີ່ລູກໜີ້ ຫາກບໍ່ທວງໜີ້ນຳລູກໜີ້ຂອງຕົນ ຊຶ່ງພາໃຫ້ເກີດຄວາມອັບປະໂຫຍດແກ່ເຈົ້າໜີ້, ເຈົ້າໜີ້ ມີສິດຮ້ອງຟ້ອງຕໍ່ສານ ເພື່ອທວງເອົາໜີ້ແທນລູກໜີ້, ເວັ້ນເສຍແຕ່ສິດຂອງລູກໜີ້ທີ່ຕ້ອງປະຕິບັດເອງ.

ຄ່າໃຊ້ຈ່າຍໃນການດຳເນີນການແທນຂອງເຈົ້າໜີ້ ຕົກເປັນຄວາມຮັບຜິດຊອບຂອງລູກໜີ້.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ກ່ຽວກັບ ກໍລະນີສະເພາະໃດໜຶ່ງນັ້ນເຈົ້າໜີ້ ແມ່ນສາມາດເປັນຕົວແທນໃນການນຳໃຊ້ສິດຂອງລູກໜີ້ໄດ້ພ້ອມທັງໃຫ້ຮູ້ເງື່ອນໄຂໃນການດຳເນີນການແທນນັ້ນ.
ຕົວຢ່າງ	**1. ກ** ເປັນລູກໜີ້ ຂອງ **ຂ** ຈຳນວນ 20.000.000 ກີບ ກົງກັນຂ້າມ **ກ** ເປັນເຈົ້າໜີ້ ຂອງ **ຄ** ຈຳນວນ 25.000.000 ກີບ ທີ່ເປັນລູກໜີ້ ຊຶ່ງໜີ້ດັ່ງກ່າວເຖິງເວລາຊຳລະແລ້ວ ເຈົ້າໜີ້ **ກ** ຫາກບໍ່ທວງເອົາເງິນ ນຳ **ຄ** ທີ່ເປັນລູກໜີ້ຂອງຕົນຈຳນວນ 25.000.000 ກີບ ນັ້ນ ເຈົ້າໜີ້ **ຂ** ກໍສາມາດທວງເອົາ ເງິນ 20.000.000 ກີບ ຈາກ **ຄ** ໂດຍກົງໄດ້ ຊຶ່ງ **ຄ** ແມ່ນເປັນລູກໜີ້ຂອງ **ກ** ແຕ່ **ກ** ຊ້ຳພັດ ເປັນລູກໜີ້ ຂອງ **ຂ** ຊຶ່ງ **ກ** ບໍ່ທວງນຳລູກໜີ້ຂອງຕົນ ດ້ວຍການຮ້ອງຟ້ອງຕໍ່ສານ.

	2. ກ ເປັນລູກໜີ້ ຂອງ **ຂ** ຈຳນວນ 20.000.000 ກີບ ກຳນົດເວລາ ໜຶ່ງ ປີ. **ກ** ເປັນພະນັກງານຂອງລັດວິສາຫະກິດແຫ່ງໜຶ່ງ ຊຶ່ງເຮັດວຽກໄດ້ 15 ປີ, ຕໍ່ມາ **ກ** ປ່ວຍໜັກບໍ່ສາມາດເຮັດວຽກໄດ້ ຈຶ່ງຂໍອອກການກ່ອນ ແລະ ຄວນຈະໄດ້ຮັບເງິນບຳເນັດ ຈຳນວນ 35.000.000 ກີບ, ແຕ່ **ກ** ພັດບໍ່ໄດ້ທວງເອົາເງິນບຳເນັດດັ່ງກ່າວ ໃນກໍລະນີນີ້: ເຈົ້າໜີ້ **ຂ** ບໍ່ສາມາດທວງເອົາເງິນ 35.000.000 ກີບ ນັ້ນໄດ້ ເພາະວ່າ ນີ້ແມ່ນສິດສະເພາະຂອງ **ກ**.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກມາດຕາ 32 ສິດດຳເນີນການແທນລູກໜີ້ ຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ປີ 2008, ໂດຍໄດ້ຈັດລຽງບາງຄຳສັບຄືນ ໃຫ້ຈະແจ້ງ, ຮັດກຸມ ແລະ ຊັດເຈນຂຶ້ນ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 423, 423/2 423/7 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ, ກ່ຽວກັບລະບົບຂອງສິດທີ່ເຈົ້າໜີ້ດຳເນີນການແທນນັ້ນ, ສຳລັບປະມວນກົດໝາຍແພ່ງຍີ່ປຸ່ນມັນແມ່ນລະບົບເພື່ອຮັບປະກັນຊັບສິນເພື່ອກະກຽມເຂົ້າສູ່ຂະບວນການບັງຄັບ ປະຕິບັດ ກໍລະນີທີ່ລູກໜີ້ບໍ່ມີກຳລັງຊັບໃນການໃຊ້ແທນໜີ້ສິນ (ແຕ່ມາດຕາ 423 ລົງໄປ). ອັນນີ້ແມ່ນມີເຈດຈຳນົງເພື່ອຍົກສູງຄວາມເປັນເຈົ້າຕົນເອງໃນການນຳໃຊ້ສິດຂອງລູກໜີ້.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 397 ສິດຂອງເຈົ້າໜີ້ຕໍ່ບຸກຄົນທີສາມ

ເຈົ້າໜີ້ ມີສິດສະເໜີຄັດຄ້ານ ຕໍ່ການຈັດຕັ້ງທີ່ກ່ຽວຂ້ອງ ຫຼື ຮ້ອງຂໍໃຫ້ສານລົບລ້າງນິຕິກຳ ທີ່ລູກໜີ້ເຮັດຂຶ້ນກັບບຸກຄົນທີສາມທີ່ບໍ່ບໍລິສຸດໃຈ ຊຶ່ງມີເຈດຕະນາຫຼົບຫຼີກການຊຳລະໜີ້ ທີ່ສ້າງຄວາມເສຍຫາຍແກ່ເຈົ້າໜີ້.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ກ່ຽວກັບ ເຈົ້າໜີ້ມີສິດສະເໜີຄັດຄ້ານ ຫຼື ຮ້ອງຂໍໃຫ້ສານລົບລ້າງ ການເຮັດນິຕິກຳຂອງລູກໜີ້ກັບບຸກຄົນທີສາມ ເພື່ອຫຼົບຫຼີກການຊຳລະໜີ້ ຊຶ່ງຈະສ້າງຄວາມເສຍຫາຍໃຫ້ແກ່ເຈົ້າໜີ້.
ຕົວຢ່າງ	**ກ** ເປັນເຈົ້າໜີ້ **ຂ** ເປັນລູກໜີ້, **ຂ** ໄດ້ໂອນສິດນຳໃຊ້ທີ່ດິນຂອງຕົນໃຫ້ **ຄ** ເພື່ອຫຼີກພັນທະການໃຊ້ໜີ້ **ກ**. **ຄ** ກໍຮູ້ວ່າ ການໂອນສິດນຳໃຊ້ທີ່ດິນຂອງ **ຂ** ເພື່ອຫລີກພັນທະການໃຊ້ໜີ້ຕໍ່ **ກ**. ສະນັ້ນ **ກ** ສາມາດເຮັດໜັງສືຄັດຄ້ານການໂອນສິດນຳໃຊ້ທີ່ດິນຂອງ **ຂ** ຕໍ່ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຫຼື ຮ້ອງຂໍໃຫ້ສານລົບລ້າງ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງຂຶ້ນໃໝ່ ເພື່ອໃຫ້ສອດຄ່ອງກັບສະພາບຕົວຈິງ, ກົດໝາຍ, ສາກົນ ຫຼື ຕ່າງປະເທດ ແລະ ມີເລື່ອງຕົວຈິງເກີດຂຶ້ນໃນສັງຄົມລາວ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 424 - 426 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ໝວດທີ 7
ການປ່ຽນແປງ, ການຍົກເລີກ ແລະ ການສິ້ນສຸດສັນຍາ

ມາດຕາ 398 ການປ່ຽນແປງສັນຍາ

ສັນຍາ ອາດຖືກປ່ຽນແປງຕາມການຕົກລົງເຫັນດີຂອງຄູ່ສັນຍາ.

ການປ່ຽນແປງສັນຍາທີ່ເປັນລາຍລັກອັກສອນ ຕ້ອງເຮັດເປັນລາຍລັກອັກສອນ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ກ່ຽວກັບ ເນື້ອໃນຂອງສັນຍາແມ່ນສາມາດປ່ຽນແປງໄດ້ເມື່ອມີການເຫັນດີລະຫວ່າງຄູ່ສັນຍາ ແລະ ກຳໃຫ້ຮູ້ວ່າກໍລະນີໃດຕ້ອງເຮັດເປັນລາຍລັກອັນສອນ.
ຕົວຢ່າງ	**ກ** ເຮັດສັນຍາກູ້ຢືມເງິນຈາກ **ຂ** ຈຳນວນ 5.000.000 ກີບ, ດອກເບ້ຍ 3% ກຳນົດເວລາ ໜຶ່ງປີ, ປະຕິບັດໄປໄດ້ ຫົກເດືອນ **ກ** ໄດ້ຂໍໃຫ້ **ຂ** ຫຼຸດດອກເບ້ຍ ເປັນ 2% ແລະ **ຂ** ເຫັນດີຫຼຸດອັດຕາດອກເບ້ຍ ຕາມການຮ້ອງຂໍ ໂດຍໄດ້ຂຽນສັນຍາເປັນລາຍລັກອັກສອນສະບັບໃໝ່ ແລະ ກຳນົດດອກເບ້ຍ ໃນສັນຍາເປັນ 2% ຕາມການຕົກລົງກັນ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 37 ວັກ 1, 2, 3 ການປ່ຽນແປງ ຫຼື ການຍົກເລີກສັນຍາ ຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ປີ 2008, ໄດ້ແຍກເອົາ ວັກ 1, 2, 3 ເພື່ອກຳນົດແຈ້ງສະເພາະການປ່ຽນແປງສັນຍາເທົ່ານັ້ນ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 421 ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2015.
ມາດຕາອ້າງອີງ	ມາດຕາ 560 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 399 ການຍົກເລີກສັນຍາຕາມການຕົກລົງ

ສັນຍາ ອາດຖືກຍົກເລີກຕາມການຕົກລົງເຫັນດີຂອງຄູ່ສັນຍາ.

ການຍົກເລີກສັນຍາທີ່ເປັນລາຍລັກອັກສອນ ຕ້ອງເຮັດເປັນລາຍລັກອັກສອນ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ກ່ຽວກັບ ສັນຍາສາມາດຍົກເລີກສັນຍາຕາມການຕົກລົງ ແລະ ໃນກໍລະນີຫາກເຮັດເປັນລາຍລັກອັກສອນໃຫ້ຍົກເລີກເປັນລາຍລັກອັກສອນ.
ຕົວຢ່າງ	**1.** **ກ** ເຮັດສັນຍາເປັນລາຍລັກອັກສອນເຊົ່າຄວາຍມາໄຖນາຈາກ **ຂ** , ເນື່ອງຈາກ **ຂ** ຈະບໍ່ເຮັດນາເພາະລູກຊາຍໄດ້ທົນໄປຮຽນຕໍ່ຕ່າງປະເທດ, ຕໍ່ມາລູກຊາຍຖືກໂຈະບໍ່ໄດ້ໄປຮຽນ, **ຂ** ຈຶ່ງໄປຂໍສະເໜີຍົກເລີກສັນຍາເປັນລາຍລັກອັກສອນນຳ **ກ** ເພື່ອວ່າຕົນຈະເຮັດນາ ແລະ **ກ** ເຫັນດີຕໍ່ຄຳສະເໜີຂອງ **ຂ**. ດັ່ງນັ້ນ **ກ** ຈຶ່ງສົ່ງຄວາຍໃຫ້ກັບ **ຂ**. 2. ສັນຍາກູ້ຢືມເງິນ ເຮັດຂຶ້ນລະຫວ່າງ **ກ** ເປັນຝ່າຍໃຫ້ກູ້ຢືມເງິນ ກັບ **ຂ** ເປັນຝ່າຍກູ້ຢືມເງິນ ຈຳນວນ 6.000.000 ກີບ ທີ່ເປັນລາຍລັກອັກສອນ (ມາດຕາ 430 ວັກ 5) ຕໍ່ມາສັນຍາກູ້ຢືມເງິນ ຖືກຍົກເລີກ ເນື່ອງຈາກວ່າ ຄູ່ສັນຍາ **ກ** ແລະ **ຂ** ໄດ້ມີການຕົກລົງເຫັນດີ ເປັນລາຍລັກອັກສອນ (ມາດຕາ 399 ວັກ 2).

ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງຂຶ້ນໃໝ່ ເພື່ອກຳນົດສະເພາະ ການຍົກເລີກສັນຍາໃຫ້ແຈ້ງຂຶ້ນ ແລະ ສັນຍາແມ່ນເກີດຈາກຄວາມສະມັກໃຈ ສະນັ້ນ ຄູ່ສັນຍາສາມຄຕົກລົງ ຍົກເລີກນຳກັນໄດ້ຄືກັນ ຊຶ່ງເປັນອິດສະຫຼະພາບ ການເຮັດສັນຍາຄືກັນ.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງ ຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 400 ການສິ້ນສຸດສັນຍາ

ສັນຍາ ສິ້ນສຸດລົງ ໃນກໍລະນີ ດັ່ງນີ້:

1. ສັນຍາທີ່ໄດ້ປະຕິບັດຢ່າງຖືກຕ້ອງ ແລະ ຄົບຖ້ວນແລ້ວ;
2. ຄູ່ສັນຍາໄດ້ເຂົ້າຮ່ວມເປັນອັນດຽວກັນ;
3. ຄູ່ສັນຍາໄດ້ມີການຕົກລົງກັນ;
4. ສັນຍາບໍ່ສາມາດປະຕິບັດໄດ້;
5. ສັນຍາຖືກຍົກເລີກ;
6. ຄູ່ສັນຍາຝ່າຍໃດໜຶ່ງໄດ້ເສຍຊີວິດ ຊຶ່ງບຸກຄົນອື່ນບໍ່ສາມາດສືບຕໍ່ປະຕິບັດໄດ້;
7. ນິຕິບຸກຄົນທີ່ເປັນຄູ່ສັນຍາໄດ້ຖືກ ຍຸບເລີກ ຫຼື ລົ້ມລະລາຍ.

ໃນກໍລະນີທີ່ນິຕິບຸກຄົນໃດໜຶ່ງ ຫາກຖືກຍຸບເລີກ ຫຼື ລົ້ມລະລາຍ, ຄູ່ສັນຍາຂອງນິຕິບຸກຄົນນັ້ນ ມີສິດທວງເອົາຄ່າໃຊ້ຈ່າຍ ແລະ ຄ່າເສຍຫາຍຕ່າງໆ ຈາກຜູ້ຮັບຜິດຊອບຊັບສິ່ງຂອງ ຂອງນິຕິບຸກຄົນທີ່ໄດ້ ຖືກຍຸບເລີກ ຫຼື ລົ້ມລະລາຍນັ້ນ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ກ່ຽວກັບ ເງື່ອນໄຂທີ່ເຮັດໃຫ້ສັນຍາມີການສິ້ນສຸດ.
ຕົວຢ່າງ	**1. ສັນຍາທີ່ໄດ້ປະຕິບັດຢ່າງຖືກຕ້ອງ ແລະ ຄົບຖ້ວນແລ້ວ.** **ກ** ກັບ **ຂ** ເຮັດສັນຍາເຊົ່າຫ້ອງແຖວ1ຫ້ອງ ກຳນົດ ໜຶ່ງປີ ເມື່ອເຖິງກຳນົດເວລາ ກຳສິ້ນສຸດສັນຍາ ຖືວ່າສັນຍາທີ່ໄດ້ປະຕິບັດຢ່າງຖືກຕ້ອງ ແລະ ຄົບຖ້ວນແລ້ວ ໝາຍເຖິງ ສັນຍາໄດ້ປະຕິບັດຕາມເຈດຈຳນົງ, ເປົ້າໝາຍຄົບຖ້ວນແລ້ວ, ກຳນົດ ເວລາ ຖືວ່າ ສັນຍາເຊົ່າ ຫ້ອງແຖວໄດ້ສິ້ນສຸດລົງ. **2. ຄູ່ສັນຍາໄດ້ເຂົ້າຮ່ວມເປັນອັນດຽວກັນ.** ບໍລິສັດ **ກ** ແລະ ບໍລິສັດ **ຂ** ໄດ້ຕົກລົງເຮັດສັນຍາຊື້ - ຂາຍ ກາເຟຮ່ວມກັນ, ຕໍ່ມາ ບໍລິສັດ **ກ** ແລະ ບໍລິສັດ **ຂ** ໄດ້ຮ່ວມກັນສ້າງຕັ້ງບໍລິສັດຂຶ້ນເປັນບໍລິສັດ ດຽວ. **3. ຄູ່ສັນຍາໄດ້ມີການຕົກລົງກັນ.** ວັນທີ 1 ມັງກອນ 2015 **ກ** ແລະ **ຂ** ເປັນຄູ່ສັນຍາ ກູ້ຢືມນຳກັນ ຈຳນວນເງິນ 5.000.000 ກີບ ຕໍ່ມາ ຄູ່ສັນຍາມ **ກ** ແລະ **ຂ** ໄດ້ຕົກລົງນຳກັນກ່ຽວກັບການ ສິ້ນສຸດສັນຍາກູ້ຢືມນັ້ນ. **4. ສັນຍາບໍ່ສາມາດປະຕິບັດໄດ້.** **ກ** ແລະ **ຂ** ໄດ້ຕົກລົງ ຊື້-ຂາຍ ໄມ້ທ່ອນນຳກັນເພື່ອສົ່ງອອກໄປຕ່າງປະເທດ ແຕ່ ລັດຖະບານ ໄດ້ອອກຄຳສັ່ງຫ້າມບໍ່ໃຫ້ສົ່ງໄມ້ທ່ອນໄປຕ່າງປະເທດອີກ ຊຶ່ງ ສັນຍາດັ່ງກ່າວບໍ່ສາມາດຈັດຕັ້ງປະຕິບັດໄດ້ອີກ ຈຶ່ງຕົກບເປັນສັນຍາທີ່ບໍ່ສາມາດ ປະຕິ ບັດໄດ້.

	5. ສັນຍາຖືກຍົກເລີກ. **ກ** ແລະ **ຂ** ໄດ້ຕົກລົງ ສ້າງຕັ້ງມູນນິຕິ **ງ** ຂຶ້ນ ຫຼັງຈາກ ສຳເລັດ ຕາມຈຸດປະສົງ ຂອງ ມູນນິທິແລ້ວ ສັນຍາກໍສາມາດຍົກເລີກໄດ້. **6. ຄູ່ສັນຍາຝ່າຍໃດໜຶ່ງໄດ້ເສຍຊີວິດຊຶ່ງບຸກຄົນອື່ນບໍ່ສາມາດສືບຕໍ່ປະຕິບັດໄດ້.** **ກ** ແລະ **ຂ** ເປັນຄູ່ສັນຍາ ຊື້-ຂາຍໝາກໄມ້ຕາມລະດູການ ຈາກ ປາກຊ່ອງ ຫາ ນະຄອນຫຼວງວຽງຈັນ ຕໍ່ມາ **ກ** ໄດ້ເສຍຊີວິດ ແລະບໍ່ມີຜູ້ທີ່ຈະສາມາດແທນຕົນ ໄດ້ສັນຍາລັກສະນະນີ້ ກໍຈະສິ້ນສຸດລົງ. **7. ນິຕິບຸກຄົນທີ່ເປັນຄູ່ສັນຍາ ໄດ້ຖືກຍຸບເລີກ ຫຼື ລົ້ມລະລາຍ.** ບໍລິສັດ **ກ** ຖືກ ສານຕັດສິນໃຫ້ເປັນ ຜູ້ລົ້ມລະລາຍຕາມກົດໝາຍ ຊຶ່ງ **ກ** ເປັນ ຄູ່ສັນຍາ ກັບ **ຂ** ໃນສັນຍາເຊົ່າເຮືອນເພື່ອເປັນຫ້ອງການ ຂອງບໍລິສັດນັ້ນ ເມື່ອ ບໍລິສັດເປັນຜູ້ທີ່ຖືກສານຕັດສິນ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 38 ການສິ້ນສຸດສັນຍາ ຂອງກົດໝາຍວ່າ ດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ປີ 2008, ຮັກສາເນື້ອໃນມາດຕາ ເກົ່າ ແຕ່ໄດ້ປັບປຸງ ຂີດໜ້າ ມາເປັນຕົວເລກ.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງຂອງປະເທດອື່ນ	ມາດຕາ 422 ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2015;
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ໝວດທີ 8
ການປ່ຽນເຈົ້າໜີ້ ແລະ ລູກໜີ້

ມາດຕາ 401 ການປ່ຽນເຈົ້າໜີ້

ເຈົ້າໜີ້ ມີສິດໂອນສິດຂອງຕົນ ໃຫ້ເຈົ້າໜີ້ຄົນໃໝ່, ເວັ້ນເສຍແຕ່ສິດທີ່ກົດໝາຍ ຫຼື ສັນຍາບໍ່ ອະນຸຍາດໃຫ້ໂອນໄດ້.

ເຈົ້າໜີ້ ຕ້ອງມອບເອກະສານກ່ຽວກັບສິດນັ້ນ ໃຫ້ເຈົ້າໜີ້ຄົນໃໝ່ ແລະ ຕ້ອງຮັບຜິດຊອບຕໍ່ຜູ້ກ່ຽວ ຖ້າສິດທີ່ໂອນໃຫ້ຜູ້ກ່ຽວນັ້ນ ຫາກບໍ່ມີຄວາມຈິງ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ກ່ຽວກັບ ການປ່ຽນແປງເຈົ້າໜີ້ ແລະ ໃຫ້ຮູ້ກ່ຽວກັບຄວາມ ເປັນອິດສະລະໃນການຕັດສິນໃຈຂອງເຈົ້າໜີ້ ທີ່ຈະມອບສິດອັນເຕັມສ່ວນຂອງ ຕົນໃຫ້ແກ່ບຸກຄົນອື່ນເປັນເຈົ້າໜີ້ແທນທີ່.
ຕົວຢ່າງ	**1. ກ** ເປັນເຈົ້າໜີ້ **ຂ** ເປັນລູກໜີ້ (ສັນຍາກູ້ຢືມເງິນ 30.000.000ກີບ) **ກ** ໄດ້ໂອນສິດທອງ (ໂອນແບບໃດ) ຊຶ່ງຕົນເປັນເຈົ້າໜີ້ນັ້ນໃຫ້ **ງ** ເປັນ ເຈົ້າໜີ້ຄົນໃໝ່ ດ້ວຍການເອົາເອກະສານທີ່ກ່ຽວຂ້ອງ ໃຫ້ **ງ** ທັງໝົດ (ກໍລະນີຊັບບາງປະເພດທີ່ຕ້ອງໄດ້ຂຶ້ນທະບຽນກໍຕ້ອງໄດ້ຂຶ້ນທະບຽນຕາມ ກົດໝາຍ).

	2. **ກ** ຢືມເງິນນຳ **ຂ** ຈຳນວນ 10.000.000 ກີບ ດອກເບັ້ຍ 16% ຕໍ່ປີ ກຳນົດເວລາໃນສັນຍາກູ້ຢືມ ໜຶ່ງປີ. ເມື່ອຍັງບໍ່ທັນໝົດກຳນົດເວລາກູ້ຢືມ **ຂ** ມີຄວາມຈຳເປັນໃຊ້ຈ່າຍເງິນ **ຂ** ຈຶ່ງມອບໃຫ້ **ຄ** ເປັນຄົນທວງທັງຕົ້ນທຶນ ແລະ ດອກເບັ້ຍ ກັບ **ກ**. ແຕ່ **ຄ** ຕ້ອງຈ່າຍເງິນໃຫ້ **ຂ** ຈຳນວນ 10.000.000 ກີບ. ໃນການປ່ຽນເຈົ້າໜີ້ຈາກ **ຂ** ມາໃຫ້ **ຄ** ນັ້ນ, **ຂ** ຕ້ອງໄດ້ມອບເອກະສານທີ່ຈຳເປັນຢ່າງຄົບຖ້ວນໃຫ້ **ຄ** ແລະ ພ້ອມທັງແຈ້ງໃຫ້ **ກ** ຊາບກ່ຽວກັບການປ່ຽນເຈົ້າໜີ້. ກໍລະນີນີ້ ແມ່ນກ່ຽວຂ້ອງກັບສັນຍາກູ້ຢືມໂດຍ **ກ** ເປັນເຈົ້າໜີ້ຄົນເກົ່າ ສ່ວນ **ຄ** ເປັນເຈົ້າໜີ້ຄົນໃໝ່ . **3.** **ກ** ໄດ້ເອົາເຮືອນໜຶ່ງຫຼັງໃຫ້ **ຂ** ເຊົ່າເປັນໄລຍະ ຫ້າປີ ຄ່າເຊົ່າປີລະ 20.000.000 ກີບ ໂດຍ **ຂ** ໄດ້ຈ່າຍລ່ວງໜ້າ ສອງປີ, ສ່ວນຍັງອີກ ສາມປີແມ່ນຈະຈ່າຍໃນທ້າຍປີທີ 2. ສອງປີ ຕໍ່ມາ **ກ** ໄດ້ຂາຍເຮືອນຫຼັງດັ່ງກ່າວໃຫ້ແກ່ **ຄ**. **ກ** ຍັງໄດ້ແຈ້ງກ່ຽວກັບຊັບທີ່ເຊົ່ານັ້ນໃຫ້ແກ່ **ຄ** ຊາບ ແລະ **ຄ** ມີສິດເກັບເງິນຄ່າເຊົ່າ 3 ປີທີ່ຍັງເຫຼືອກັບ **ຂ**. ໃນກໍລະນີນີ້ ກ ຕ້ອງໄດ້ໂອນສິດນຳໃຊ້ທີ່ດິນ ແລະ ເຮືອນໃຫ້ເປັນກຳມະສິດຂອງ **ຄ** ພ້ອມທັງເອກະສານທີ່ຈຳເປັນກ່ຽວກັບສັນຍາເຊົ່າລະຫວ່າງ **ກ** (ຜູ້ໃຫ້ເຊົ່າ) ແລະ **ຂ** (ຜູ້ເຊົ່າ). ນີ້ແມ່ນກ່ຽວຂ້ອງກັບສັນຍາເຊົ່າຊັບສິ່ງຂອງໂດຍ **ກ** ເປັນເຈົ້າໜີ້ຄົນເກົ່າ ສ່ວນ **ຄ** ເປັນເຈົ້າໜີ້ຄົນໃໝ່.
ເຫດຜົນໃນການປັບປຸງ	ມາດຕານີ້ແມ່ນປັບປຸງເອົາເນື້ອໃນ ມາດຕາ 31 ວັກ 1 ແລະ 2 ຜົນບັງຄັບຂອງສັນຍາຕໍ່ບຸກຄົນອື່ນ ຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ປີ 2008, ມາເປັນມາດຕານີ້ ເພື່ອໃຫ້ມີເນື້ອໃນຈະແຈ້ງຂຶ້ນຕື່ມ ເພື່ອໃຫ້ແທດເໝາະກັບການພັດທະນາເສດຖະກິດສັງຄົມ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 365 ແລະ 366 ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2015; ມາດຕາ 466-467 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ; ມາດຕາ 303 ຂອງປະມວນກົດໝາຍແພ່ງ ແລະ ພານິດໄທ.
ມາດຕາອ້າງອີງ	ມາດຕາ 403 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 402 ການປ່ຽນລູກໜີ້

ລູກໜີ້ ມີສິດໂອນພັນທະຂອງຕົນ ໃຫ້ລູກໜີ້ຄົນໃໝ່ ປະຕິບັດແທນຕົນກໍໄດ້ ແຕ່ຕ້ອງໄດ້ຮັບການເຫັນດີຈາກເຈົ້າໜີ້ກ່ອນ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ກ່ຽວກັບ ລູກໜີ້ສາມາດປ່ຽນແປງລູກໜີ້ຄົນໃໝ່ ບົນພື້ນຖານການຕົກລົງເຫັນດີຈາກເຈົ້າໜີ້ກ່ອນ.
ຕົວຢ່າງ	**1.** **ກ** ເປັນລູກໜີ້ **ຂ** ເປັນເຈົ້າໜີ້ (ສັນຍາກູ້ຢືມເງິນ 30.000.000ກີບ) **ກ** ລູກໜີ້ ຕ້ອງໄດ້ມອບເອກະສານ ທີ່ກ່ຽວຂ້ອງກັບພັນທະການຊຳລະໜີ້ຂອງຕົນ (30.000.000 ກີບ) ໃຫ້ **ງ** ຊຶ່ງເປັນລູກໜີ້ຄົນໃໝ່ ປະຕິບັດພັນທະແທນຕົນໄດ້ ບົນພື້ນຖານການຕົກລົງເຫັນດີຈາກເຈົ້າໜີ້ **ຂ** ກ່ອນ. **2.** ສັນຍາກູ້ຢືມເງິນ **ກ** ເຮັດສັນຍາກູ້ຢືມເງິນນຳ **ຂ** ຈຳນວນ 3.000.000 ກີບ ດອກເບ້ຍ 3 % ຕໍ່ເດືອນ ກຳນົດເວລາ ໜຶ່ງປີ. **ກ** ໄດ້ໃຊ້ແທນໄປແລ້ວ ຈຳນວນ 1.000.000 ກີບ. ສ່ວນທີ່ຍັງເຫຼືອ ຈຳນວນ 2.000.000 ກີບ ພ້ອມດອກເບ້ຍ **ກ** ບໍ່ສາມາດປະຕິບັດສັນຍາກັບ **ຂ**. **ກ** ຈຶ່ງສະເໜີກັບ **ຂ** ເພື່ອໂອນສັນຍາໃຫ້ກັບ **ຄ** ໃນການກູ້ຢືມສ່ວນທີ່ຍັງເຫຼືອຈຳນວນ 2.000.000 ກີບ ພ້ອມດອກເບ້ຍ.

ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 31 ວັກ 4, 5 ຜົນບັງຄັບຂອງສັນຍາຕໍ່ບຸກຄົນອື່ນ ຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ປີ 2008, ໂດຍໄດ້ແຍກເອົາ ວັກ 4, 5 ຂອງມາດຕາ 31 ມາປັບປຸງໃໝ່ ໃຫ້ສອດຄ່ອງກັບສະພາບຕົວຈິງ, ກົດໝາຍ, ສາກົນ ຫຼື ຕ່າງປະເທດ ແລະ ມີເລື່ອງຕົວຈິງເກີດຂຶ້ນໃນສັງຄົມລາວ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 470 - 472/4 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 403 ການໂອນສິດ ແລະ ພັນທະ

ຄູ່ສັນຍາຝ່າຍໃດໜຶ່ງ ສາມາດໂອນສິດ ແລະ ພັນທະທັງໝົດຂອງຕົນຕາມສັນຍາ ໃຫ້ແກ່ບຸກຄົນທີສາມ ບົນພື້ນຖານການເຫັນດີເປັນລາຍລັກອັກສອນ ຂອງຄູ່ສັນຍາ ແລະ ບຸກຄົນທີສາມນັ້ນ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ກ່ຽວກັບ ຄູ່ສັນຍາຝ່າຍໃດຝ່າຍໜຶ່ງສາມາດໂອນສິດແລະພັນທະຂອງຕົນໃຫ້ບຸກຄົນທີ່ສາມ ບົນພື້ນຖານການຕົກລົງເຫັນດີເປັນລາຍລັກອັກສອນທັງສອງຝ່າຍຂອງຄູ່ສັນຍາ ແລະ ບຸກຄົນທີ່ສາມ.
ຕົວຢ່າງ	**ກ** ໄດ້ເຮັດສັນຍາທີ່ເປັນລາຍລັກອັກສອນເຊົ່າຫ້ອງແຖວ ຂອງ **ຂ** ກຳນົດ ໜຶ່ງປີ **ກ** ຢູ່ໄດ້ ຫ້າເດືອນ, ຫຼັງຈາກນັ້ນ **ກ** ໄດ້ໂອນສິດ ແລະ ພັນທະຂອງຕົນໃຫ້ **ຄ** ຕໍ່ມາ **ກ** ແລະ **ຄ** ໄດ້ເຮັດສັນຍາເປັນລາຍລັກອັກສອນເຊົ່າຕໍ່ຈາກ **ຂ** ໃນເມື່ອກ່ອນທີ່ **ກ** ແລະ **ຂ** ເຮັດສັນຍາເຊົ່ານຳກັນ, ຊຶ່ງ **ຄ** ເປັນຜູ້ຮັບສິດ ແລະ ພັນທະຕາມສັນຍາເຊົ່າຫ້ອງແຖວຕໍ່ຈາກ **ກ** ໝາຍຄວາມວ່າ **ຄ** ມີສິດຢູ່ຫ້ອງແຖວ ແລະ ມີພັນທະຈ່າຍເງິນຄ່າເຊົ່າຫ້ອງແຖວ ໃຫ້ **ຂ** ຕາມກຳນົດເວລາຂອງສັນຍາ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງໃໝ່ ໃຫ້ສອດຄ່ອງກັບສະພາບຕົວຈິງ, ກົດໝາຍ, ສາກົນ ຫຼື ຕ່າງປະເທດ ແລະ ມີເລື່ອງຕົວຈິງເກີດຂຶ້ນໃນສັງຄົມລາວ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 539/2 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ໝວດທີ 9
ຜົນຂອງສັນຍາຕໍ່ບຸກຄົນທີສາມ

ມາດຕາ 404 ຜົນຂອງສັນຍາຕໍ່ບຸກຄົນທີສາມ

ສັນຍາ ຈະມີຜົນຕໍ່ບຸກຄົນທີສາມ ກໍຕໍ່ເມື່ອສັນຍານັ້ນຫາກເຮັດຂຶ້ນ ເພື່ອບຸກຄົນທີສາມ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ກ່ຽວກັບ ສັນຍາແມ່ນມີຜົນຕໍ່ຄູ່ສັນຍາເທົ່ານັ້ນ,ແຕ່ກໍລະນີຍົກເວັ້ນຄື: ເມື່ອສັນຍາຫາກເປັນສັນຍາເພື່ອບຸກຄົນທີສາມ.

ຕົວຢ່າງ	**1. ກ** (ຜູ້ຊື້) ແລະ **ຂ** (ຜູ້ຂາຍ) ຊຶ່ງເຮັດສັນຍາຊື້ - ຂາຍ ສິດນຳໃຊ້ທີ່ດິນພ້ອມເຮືອນ 1 ຫຼັງ, ໂດຍຕົກລົງກັນວ່າ **ກ** (ຜູ້ຊື້) ຈະຈ່າຍເງິນໃຫ້ **ຂ** (ຜູ້ຂາຍ) ໂດຍໃຫ້ **ຄ** (ບຸກຄົນທີສາມ) ມີກຳມະສິດໃນທີ່ດິນ ແລະ ເຮືອນຫຼັງດັ່ງກ່າວ. **2. ກ** ໄດ້ເອົາເງິນໃຫ້ **ຂ** ຢືມໂດຍຕົກລົງກັນວ່າໃຫ້ **ຂ** ເວລາໃຊ້ແທນແມ່ນຈ່າຍເງິນ **ຄ**.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງໃໝ່ ໃຫ້ສອດຄ່ອງກັບສະພາບຕົວຈິງ, ກົດໝາຍ, ສາກົນ ຫຼື ຕ່າງປະເທດ ແລະ ມີເລື່ອງຕົວຈິງເກີດຂຶ້ນໃນສັງຄົມລາວ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 1165 ຂອງປະມວນກົດໝາຍແພ່ງຝຣັ່ງ; ມາດຕາ 537-539 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 405 ສັນຍາເພື່ອບຸກຄົນທີສາມ

ສັນຍາເພື່ອບຸກຄົນທີສາມ ແມ່ນ ສັນຍາທີ່ເຮັດຂຶ້ນ ເພື່ອຜົນປະໂຫຍດແກ່ບຸກຄົນອື່ນ ທີ່ບໍ່ແມ່ນຄູ່ສັນຍາ.

ບຸກຄົນທີສາມ ຈະໄດ້ຮັບການປົກປ້ອງສິດ ແລະ ຜົນປະໂຫຍດ ຕາມທີ່ໄດ້ກຳນົດໄວ້ໃນສັນຍາ ກໍຕໍ່ເມື່ອຜູ້ກ່ຽວຫາກໄດ້ຮັບເອົາຜົນປະໂຫຍດດັ່ງກ່າວ ແລະ ຜົນປະໂຫຍດນັ້ນ ຈະບໍ່ສາມາດຖອນຄືນໄດ້.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ກ່ຽວກັບ ນິຍາມຂອງສັນຍາທີ່ມີຜົນຕໍ່ບຸກຄົນທີສາມ.
ຕົວຢ່າງ	**ກ** ໄດ້ໄປຝາກເງິນ ກັບທະນາຄານ ຈຳນວນ 60.000.000 ກີບ ເພື່ອເປັນທຶນການສຶກສາ ໃນການສຶກສາຕໍ່ວິຊາຊີບໃດໜຶ່ງ ຂອງ **ຄ** ໂດຍຜ່ານບັນຊີຂອງມູນນິທິສົ່ງເສີມການສຶກສາສຳລັບຜູ້ດ້ອຍໂອກາດ, ພາຍຫຼັງທີ **ຄ** ໄດ້ເຂົ້າສຶກສາວິຊາຊີບໃດໜຶ່ງ ຜູ້ກ່ຽວສາມາດນຳໃຊ້ທຶນການສຶກສານັ້ນ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງໃໝ່ ໃຫ້ສອດຄ່ອງກັບສະພາບຕົວຈິງ, ກົດໝາຍ, ສາກົນ ຫຼື ຕ່າງປະເທດ ແລະ ມີເລື່ອງຕົວຈິງເກີດຂຶ້ນໃນສັງຄົມລາວ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 374 - 376 ຂອງປະມວນກົດໝາຍແພ່ງ ແລະ ພານິດໄທ; ມາດຕາ 328 - 335 ຂອງປະມວນກົດໝາຍແພ່ງເຢຍລະມັນ; ມາດຕາ 379 - 382 ຂອງປະມວນກົດໝາຍແພ່ງກຳປູເຈຍ.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ໝວດທີ 10
ປະເພດສັນຍາ
ກ. ສັນຍາຊື້ຂາຍ

ມາດຕາ 406 ສັນຍາຊື້ຂາຍ

ສັນຍາຊື້ຂາຍ ແມ່ນ ການຕົກລົງຂອງຄູ່ສັນຍາ, ຊຶ່ງຜູ້ຂາຍມີພັນທະມອບຊັບສິ່ງຂອງ ໃຫ້ເປັນກຳມະ ສິດຂອງຜູ້ຊື້ ແລະ ຜູ້ຊື້ຕ້ອງຮັບເອົາຊັບສິ່ງຂອງ ແລະ ມີພັນທະຈ່າຍເງິນຕາມລາຄາທີ່ໄດ້ຕົກລົງກັນ.

ຜູ້ຂາຍ ຈະຂາຍຊັບສິ່ງຂອງອັນໃດກໍໄດ້ ທີ່ເປັນກຳມະສິດຂອງຕົນ. ຖ້າຊັບສິ່ງຂອງທີ່ຂາຍໃຫ້ຜູ້ຊື້ນັ້ນຫາກຖືກຮິບຕາມຄຳຕັດສິນຂອງສານ ຜູ້ຂາຍຕ້ອງທົດແທນຄ່າເສຍຫາຍໃຫ້ແກ່ຜູ້ຊື້.

ໃນການເຮັດສັນຍາ ຜູ້ຂາຍຕ້ອງແຈ້ງໃຫ້ຜູ້ຊື້ຊາບກ່ຽວກັບສິດຂອງບຸກຄົນອື່ນ ໃນຊັບສິ່ງຂອງທີ່ຂາຍ ເຊັ່ນ ຊັບສິ່ງຂອງທີ່ຂາຍນັ້ນ ຍັງມີຜູ້ເຊົ່າຢູ່. ການບໍ່ແຈ້ງໃຫ້ຊາບນີ້ ຈະພາໃຫ້ຜູ້ຊື້ ມີສິດຮ້ອງຂໍຍົກເລີກສັນຍາ ແລະ ຮ້ອງຂໍເອົາຄ່າເສຍຫາຍ ຫຼື ຫຼຸດຜ່ອນລາຄາຊື້.

ເມື່ອສິດກ່ຽວກັບກຳມະສິດ ຫາກເປັນຂອງຜູ້ຊື້ກ່ອນການມອບຊັບສິ່ງຂອງແລ້ວ ຜູ້ຂາຍຍັງມີພັນທະຮັກສາຊັບສິ່ງຂອງດັ່ງກ່າວ ໂດຍບໍ່ໃຫ້ມີການເສຍຫາຍ ຫຼື ເປ່ເພ ຈົນກວ່າຜູ້ຊື້ຈະຮັບເອົາ.

ຜູ້ຊື້ ເປັນເຈົ້າກຳມະສິດໃນຊັບສິ່ງຂອງ ທີ່ຕົນໄດ້ຊື້ນັ້ນ:

1. ນັບແຕ່ເວລາຜູ້ຊື້ ແລະ ຜູ້ຂາຍໄດ້ມອບເງິນ ແລະ ຊັບສິ່ງຂອງໃຫ້ແກ່ກັນ;
2. ນັບແຕ່ເວລາຜູ້ຊື້ໄດ້ຈ່າຍເງິນຢ່າງຄົບຖ້ວນເປັນຕົ້ນໄປ ເຖິງຜູ້ຂາຍຈະບໍ່ທັນໄດ້ມອບຊັບສິ່ງຂອງໃຫ້ກໍຕາມ ຫຼື ນັບແຕ່ເວລາຜູ້ຂາຍໄດ້ມອບຊັບສິ່ງຂອງໃຫ້ແລ້ວ ແຕ່ຜູ້ຊື້ຍັງບໍ່ທັນໄດ້ຈ່າຍເງິນ ຕາມການຕົກລົງກັນກໍຕາມ;
3. ສຳລັບຊັບທີ່ຕ້ອງໄດ້ຂຶ້ນທະບຽນ, ຜູ້ຊື້ ໄດ້ກຳມະສິດ ນັບແຕ່ເວລາທີ່ໄດ້ຂຶ້ນທະບຽນຊັບນັ້ນ ເປັນ ຕົ້ນໄປ ເຖິງຊັບນັ້ນ ຈະໄດ້ມອບ ຫຼື ໄດ້ຈ່າຍເງິນໃຫ້ແກ່ກັນແລ້ວກໍຕາມ.

ຈຸດປະສົງ	ເພື່ອກຳນົດກ່ຽວກັບ ນິຍາມຂອງການຊື້-ຂາຍທົ່ວໄປ. ເມື່ອມີການຊື້-ຂາຍ ຜູ້ຂາຍຈະມີພັນທະມອບຊັບສິ່ງຂອງ ແລະ ກຳມະສິດໃນຊັບສິ່ງຂອງໃຫ້ຜູ້ຊື້, ສ່ວນຜູ້ຊື້ແມ່ນຕ້ອງຈ່າຍເງິນຕາມລາຄາທີ່ຕົກລົງກັນໄວ້ ແລ້ວຮັບເອົາຊັບສິ່ງຂອງດັ່ງກ່າວ, ຊຶ່ງການເຮັດໃຫ້ເຫັນໄດ້ຢ່າງຈະແจ້ງກ່ຽວກັບການປະຕິບັດສິດ ແລະ ພັນທະ ເຊິ່ງກັນ ແລະ ກັນ. ການເຮັດຄືແບບນີ້ເພື່ອເຮັດໃຫ້ຄູ່ສັນຍາໄດ້ຮູ້ເຖິງຫຼັກການຂອງການຊື້-ຂາຍ ທັງສາມາດນຳໃຊ້ປະຕິບັດ. ນອກນັ້ນ, ຍັງເຮັດໃຫ້ເຫັນວ່າໃນສັນຍາຊື້-ຂາຍ ນັ້ນຕ້ອງມີກຳມະສິດໃນຊັບສິ່ງຂອງທີ່ເປັນເປົ້າໝາຍ, ນີ້ກໍເພື່ອໃຫ້ເຫັນເຖິງກໍລະນີທີ່ຊັບສິ່ງຂອງທີ່ຈະຊື້-ຂາຍ ຫາກມີສິດຂອງຜູ້ອື່ນຢູ່ນັ້ນ ຜູ້ຂາຍຕ້ອງປະຕິບັດພັນທະໃນການແຈ້ງເລື່ອງດັ່ງກ່າວຕໍ່ຜູ້ຊື້. ການເຮັດໃຫ້ເຫັນພັນທະໃນການຄຸ້ມຄອງຮັກສາພາຍຫຼັງທີ່ໄດ້ໂອນກຳມະສິດຂອງຊັບສິ່ງຂອງທີ່ເປັນເປົ້າໝາຍໄປຫາຜູ້ຊື້ແລ້ວ. ນອກນີ້ຍັງໃຫ້ເຫັນເວລາທີ່ຊັບສິ່ງຂອງທີ່ຊື້ນັ້ນໄດ້ປ່ຽນມາເປັນຂອງຜູ້ຊື້.
ຕົວຢ່າງ	**1. ກ** ໄດ້ຕົກລົງຊື້ຂາຍກະເປົາຂອງ **ຂ** ຈຳນວນ 1 ໜ່ວຍ ໃນລາຄາ 200.000 ກີບ, **ກ** ຕ້ອງຈ່າຍເງິນຈຳນວນ 200.000 ກີບໃຫ້ **ຂ** ແລະ **ຂ** ກໍຕ້ອງມອບກະເປົາໜ່ວຍນັ້ນໃຫ້ **ກ**. **2. ກ** ຊື້ໂທລະສັບ A (1 ເຄື່ອງ) ຢູ່ຮ້ານ **ຂ** ໃນລາຄາ 2.000.000 ກີບ. **ກ** ໄດ້ຈ່າຍເງິນໃຫ້ **ຂ** ແລະ **ຂ** ກໍໄດ້ມອບໂທລະສັບ A ໃຫ້ **ກ**, **ກ** ໄດ້ກຳມະສິດໃນໂທລະສັບໜ່ວຍນີ້ນັບແຕ່ໄດ້ມີການມອບຮັບຊັບໃຫ້ແກ່ກັນ; **3. ກ** ໄດ້ຂາຍທີ່ດິນ ແລະ ເຮືອນໃຫ້ **ຂ** ໃນລາຄາ 100.000.000 ກີບ ຊຶ່ງ **ຂ** ໄດ້ຈ່າຍເງິນຄົບຖ້ວນ **ກ** ແລ້ວ. ແຕ່ທີ່ດິນແລະ ເຮືອນດັ່ງກ່າວຂອງ ກ ແມ່ນ ຖືກຮິບຕາມຄຳຕັດສິນຂອງສານເພື່ອໃຊ້ແທນໜີ້ສິນໃຫ້ **ຄ**. ໃນກໍລະນີນີ້ **ກ** ຕ້ອງທົດແທນເງິນ 100.000.000 ກີບ ຄືນໃຫ້ **ຂ**; **4. ຈ** ໄດ້ສັ່ງຊື້ລົດຈັກ ABC ນຳຮ້ານ **ສ** ໃນລາຄາ 50.000.000 ກີບ ໂດຍທີ່ **ຈ** ໄດ້ໂອນເງິນໃຫ້ **ສ** ແລະ **ສ** ກໍກວດເຫັນວ່າເງິນເຂົ້າຄົບຖ້ວນຈຳນວນ. ຫຼັງຈາກມື້ສັ່ງຊື້ 7 ວັນ **ຈ** ຈຶ່ງໄດ້ເຂົ້າມາເອົາລົດຄັນດັ່ງກ່າວ. ໃນກໍລະນີນີ້ ຖືວ່າ ຮ້ານ **ສ** ຕ້ອງປົກປັກຮັກສາລົດຄັນດັ່ງກ່າວຈົນ **ຈ** ມາຮັບເອົາ;

	5. ກ ໄດ້ສັ່ງຊື້ຄອມພິວເຕີ B ທາງອິນເຕີເນັດ ນຳ **ຂ** ໃນລາຄາ 7.000.000 ກີບ ໂດຍທີ່ **ກ** ໄດ້ໂອນເງິນເຂົ້າບັນຊີຂອງ **ຂ** ແລະ **ຂ** ກໍກວດເຫັນວ່າເງິນຂອງ **ກ** ໄດ້ເຂົ້າບັນຊີແລ້ວ ແຕ່ **ຂ** ຍັງບໍ່ໄດ້ມອບຄອມພິວເຕີ B ໃຫ້ **ກ** ເນື່ອງຈາກວ່າການຂົນສົ່ງຄອມພິວເຕີ B ນັ້ນຕ້ອງໃຊ້ເວລາ 3 ມື້ ຈຶ່ງຈະຮອດທີ່ຢູ່ຂອງ **ກ**. **ກ** ໄດ້ເປັນເຈົ້າກຳມະສິດໃນຄອມພິວເຕີ B ນັບແຕ່ເວລາຈ່າຍເງິນໃຫ້ **ຂ** ແລະ **ຂ** ກໍກວດເຫັນຈຳນວນເງິນທີ່ຕົກລົງກັນ; **6. ກ** ສັ່ງຊື້ເຂົ້າສານນຳຮ້ານ **ຂ** ຈຳນວນ 1 ໂຕນ. ຮ້ານ **ຂ** ໄດ້ສົ່ງເຂົ້າສານໃຫ້ **ກ** ຕາມຈຳນວນແລ້ວ ແຕ່ການຊຳລະເງິນແມ່ນຫຼັງຈາກມື້ສັ່ງຊື້ເຂົ້າສານ. ໃນກໍລະນີນີ້ **ກ** ເປັນເຈົ້າກຳມະສິດແຕ່ເວລາທີ່ຮ້ານ **ຂ** ສົ່ງເຂົ້າສານມາຮອດທີ່ຢູ່ຂອງ **ກ**.
ເຫດຜົນໃນການປັບປຸງ	ມາດຕານີ້ແມ່ນປັບປຸງມາຈາກ ມາດຕາ 39 ສັນຍາຊື້ຂາຍ ຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາແລະນອກສັນຍາ ປີ 2008, ໂດຍສ້າງໃໝ່ ວັກ 5 ຂໍ້ 3 "**ສຳລັບຊັບທີ່ຕ້ອງໄດ້ຂຶ້ນທະບຽນ, ຜູ້ຊື້ ໄດ້ກຳມະສິດ ນັບແຕ່ເວລາທີ່ໄດ້ຂຶ້ນທະບຽນຊັບນັ້ນ ເປັນຕົ້ນໄປ ເຖິງວ່າຊັບນັ້ນ ຈະໄດ້ມອບ ຫຼື ໄດ້ຈ່າຍເງິນໃຫ້ແກ່ກັນແລ້ວກໍຕາມ**"
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 430 ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2015; ມາດຕາ 400, 555 ແລະ 562 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 292 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສຳລັບວັກ 2 ຂອງມາດຕານີ້, ກໍລະນີທີ່ໄດ້ເຮັດສັນຍາຊື້-ຂາຍ ຊັບສົ່ງຂອງທີ່ຍັງເປັນກຳມະສິດຂອງບຸກຄົນອື່ນ, ຈາກນັ້ນ, ຈຶ່ງໂອນຊັບນັ້ນມາເປັນກຳມະສິດຂອງຜູ້ຂາຍກ່ອນ ແລ້ວຈຶ່ງມອບໃຫ້ຜູ້ຊື້ກໍໜ້າຈະເປັນໄປໄດ້.

ມາດຕາ 407 ຄຸນນະພາບຂອງຊັບທີ່ຂາຍ

ຄຸນນະພາບຂອງຊັບສົ່ງຂອງທີ່ຂາຍ ຕ້ອງໃຫ້ຖືກຕ້ອງຕາມເນື້ອໃນຂອງສັນຍາ. ໃນກໍລະນີທີ່ສັນຍາຫາກບໍ່ໄດ້ກຳນົດ ຫຼື ກຳນົດບໍ່ຈະແຈ້ງ ກ່ຽວກັບຄຸນນະພາບທີ່ຕ້ອງການນັ້ນ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍມາດຕະຖານ ຫຼື ກົດໝາຍອື່ນທີ່ກ່ຽວຂ້ອງ ຫຼື ມາດຕະຖານທີ່ຍອມຮັບເປັນປະເພນີເຄີຍປະຕິບັດກັນມາ ເຊັ່ນ ຄຸນນະພາບ ທີ່ເໝາະສົມກັບລາຄາຂອງສິນຄ້າ ໂດຍສອດຄ່ອງກັບວັດຖຸປະສົງຂອງສັນຍາ.

ຖ້າຊັບສົ່ງຂອງທີ່ຂາຍນັ້ນ ຫາກບໍ່ມີຄຸນນະພາບ ຕາມທີ່ໄດ້ກຳນົດໄວ້ໃນວັກທີໜຶ່ງ ຂອງມາດຕານີ້, ຜູ້ຂາຍ ຕ້ອງຮັບຜິດຊອບໃຊ້ແທນຄ່າເສຍຫາຍທີ່ເກີດຂຶ້ນຕໍ່ຜູ້ຊື້.

ໃນກໍລະນີທີ່ຜູ້ຊື້ ຫາກໄດ້ຮູ້ວ່າຊັບສົ່ງຂອງນັ້ນບໍ່ມີຄຸນນະພາບແລ້ວ, ຜູ້ຊື້ມີສິດຂໍໃຫ້ສ້ອມແປງຄືນ, ປ່ຽນເອົາຊັບສົ່ງຂອງປະເພດດຽວກັນທີ່ມີຄຸນນະພາບ, ຂໍຫຼຸດລາຄາ ຫຼື ຍົກເລີກສັນຍາ ພ້ອມທັງທວງເອົາການໃຊ້ແທນຄ່າເສຍຫາຍ.

ຜູ້ຊື້ ຕ້ອງກວດເບິ່ງຄຸນນະພາບຂອງຊັບສົ່ງຂອງທີ່ຊື້. ໃນກໍລະນີທີ່ພົບເຫັນຄວາມບົກພ່ອງໃນຊັບສົ່ງຂອງທີ່ຊື້, ຜູ້ຊື້ຕ້ອງແຈ້ງ ໃຫ້ຜູ້ຂາຍຊາບຢ່າງຮີບດ່ວນ ເພື່ອແກ້ໄຂຂໍ້ບົກພ່ອງ, ຖ້າບໍ່ດັ່ງນັ້ນ ຜູ້ຊື້ຕ້ອງຮັບຜິດຊອບເອົາເອງຕໍ່ຄວາມບົກພ່ອງເຫຼົ່ານັ້ນ, ເວັ້ນເສຍແຕ່ ສັນຍາ ຫຼື ກົດໝາຍ ຫາກໄດ້ກຳນົດໄວ້ເປັນຢ່າງອື່ນ ເຊັ່ນ ການຮັບປະກັນຄຸນນະພາບຂອງສິນຄ້າສະເພາະຕາມມາດຕະຖານ.

ຈຸດປະສົງ	ເພື່ອກຳນົດກ່ຽວກັບຄຸນນະພາບຂອງຊັບທີ່ຂາຍ, ກຳນົດເວລາໃນການແຈ້ງຄຸນນະພາບຂອງຊັບທີ່ຂາຍນັ້ນໃຫ້ຖືກຕ້ອງ ແລະ ສອດຄ່ອງກັບການຕົກລົງ ພ້ອມທັງຄວາມຮັບຜິດຊອບຂອງຜູ້ຂາຍ ແລະ ຜູ້ຊື້. ຄຸນນະພາບຂອງຊັບທີ່ຂາຍນັ້ນ ບໍ່ສອດຄ່ອງກັບການຕົກລົງຂອງຄູ່ສັນຍາ ຝ່າຍຊື້ມີສິດຂໍປ່ຽນແປງເນື້ອໃນ ຫຼື ຍົກເລີກສັນຍາ ພ້ອມທັງທວງໃຫ້ຝ່າຍຂາຍຮັບຜິດຊອບໄດ້. ຝ່າຍຊື້ມີສິດກວດກາຊັບທີ່ຊື້ ເມື່ອເຫັນວ່າຊັບທີ່ຊື້ນັ້ນບໍ່ສອດຄ່ອງກັບການຕົກລົງ ຕ້ອງແຈ້ງໃຫ້ຝ່າຍຂາຍທັນທີເພື່ອແກ້ໄຂໃຫ້ຄົບຖ້ວນ. ຖ້າຫາກວ່າຝ່າຍຊື້ບໍ່ໄດ້ແຈ້ງ ຖືວ່າເປັນ ຄວາມຜິດຂອງຝ່າຍຊື້ເອງ.
ຕົວຢ່າງ	**1. ກ** ໄດ້ຊື້ໂທລະສັບລາຄາ 2,000,000 ກີບ ຈາກຮ້ານ **ຂ**. ແຕ່ເມື່ອ **ກ** ມາຮອດເຮືອນແລ້ວລອງໃຊ້ໂທລະສັບດັ່ງກ່າວຈຶ່ງພົບວ່າມັນມີສຽງແຊວແຊກຊ້ອນ. ກໍລະນີນີ້, **ກ** ສາມາດທວງໃຫ້ **ຂ** ສ້ອມແປງໂທລະສັບໜ່ວຍນັ້ນ, ປ່ຽນໜ່ວຍໃໝ່, ຂໍໃຫ້ຫຼຸດລາຄາໂທລະສັບໜ່ວຍນັ້ນ ຫຼື ກໍລະນີທີ່ບໍ່ຖືກຕ້ອງຕາມຈຸດປະສົງຂອງສັນຍາ ແມ່ນສາມາດຍົກເລີກສັນຍາ, ຖ້າມີຄວາມເສຍຫາຍ ກໍສາມາດທວງເອົາການໃຊ້ແທນຄ່າເສຍຫາຍໄດ້. **2. ກ** ໄດ້ຊື້ໂທລະສັບລາຄາ 2.000.000 ກີບ ຈາກຮ້ານຂອງ **ຂ** (ມີຮັບປະກັນ ຫົກເດືອນ). ແຕ່ເມື່ອ **ກ** ມາເຮືອນແລ້ວລອງໃຊ້ໂທລະສັບໜ່ວຍດັ່ງກ່າວ ຈຶ່ງພົບວ່າມັນມີສຽງແຊວແຊກຊ້ອນ. ແຕ່ຍ້ອນຄາວຽກຈຶ່ງປະປ່ອຍຈົນກາຍເວລາ ຫົກ ເດືອນ. **ກ** ບໍ່ສາມາດທວງໃຫ້ **ຂ** ສ້ອມແປງໂທລະສັບ, ປ່ຽນເອົາໜ່ວຍໃໝ່ ຫຼື ຂໍໃຫ້ຫຼຸດລາຄາໂທລະສັບໜ່ວຍນັ້ນ, ບໍ່ສາມາດຍົກເລີກສັນຍາ, ບໍ່ສາມາດທວງເອົາການໃຊ້ແທນຄ່າເສຍຫາຍ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 40 ຄຸນນະພາບຂອງຊັບສິ່ງຂອງທີ່ຂາຍ ຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ປີ 2008, ຊຶ່ງຜ່ານມາກຳນົດບໍ່ຈະແຈ້ງເຮັດໃຫ້ມີການປັບບາງປະໂຫຍກ ຫຼື ຄຳສັບ ເຊັ່ນ: "**ໃນກໍລະນີທີ່ສັນຍາຫາກ ບໍ່ໄດ້ກຳນົດ ຫຼື ກຳນົດບໍ່ຈະແຈ້ງກ່ຽວກັບຄຸນນະພາບທີ່ຕ້ອງການນັ້ນ ໃຫ້ປະຕິບັດຢ່າງສອດຄ່ອງກັບກົດໝາຍວ່າດ້ວຍມາດຕະຖານ ຫຼື ກົດໝາຍອື່ນທີ່ກ່ຽວຂ້ອງ ຫຼື ມາດຕະຖານທີ່ຍອມຮັບເປັນປະເພນີເຄີຍປະຕິບັດກັນມາ ເຊັ່ນ ຄຸນນະພາບ ທີ່ເໝາະສົມກັບລາຄາຂອງສິນຄ້າ ໂດຍສອດຄ່ອງກັບວັດຖຸປະສົງຂອງສັນຍາ**", "**ຕາມທີ່ໄດ້ກຳນົດໄວ້ໃນ ວັກ 1 ຂອງມາດຕານີ້ ", "ເວັ້ນເສຍແຕ່ ສັນຍາ ຫຼື ກົດໝາຍ ຫາກໄດ້ກຳນົດໄວ້ເປັນຢ່າງອື່ນ ເຊັ່ນ ການຮັບປະກັນຄຸນນະພາບຂອງສິນຄ້າສະເພາະຕາມມາດຕະຖານ.**" "**ຕາມທີ່ໄດ້ກຳນົດໄວ້ໃນວັກ 4 ຂອງມາດຕານີ້**"
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 541- 545, 562, 563, 564, 415 ແລະ 416 ປະມວນກົດໝາຍແພ່ງຍີ່ປຸ່ນ; ມາດຕາ 526 ຂອງປະມວນກົດໝາຍການຄ້າຍີ່ປຸ່ນ; ມາດຕາ 1648 ຂອງປະມວນກົດໝາຍແພ່ງຝຣັ່ງ; ມາດຕາ 432 ຄຸນນະພາບຂອງວັດຖຸກຳທີ່ຂາຍ; ມາດຕາ 437 ຄວາມຮັບຜິດຊອບຕໍ່ການສົ່ງມອບຊັບທີ່ບໍ່ຖືກກັບຄຸນນະພາບ; ມາດຕາ 449 ການໃຊ້ແທນຄ່າເສຍຫາຍໃນໄລຍະການຮັບປະກັນ; ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2015.

ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 408 ການຂາຍສິນຄ້າເປັນເງິນຜ່ອນ

ການຂາຍສິນຄ້າເປັນເງິນຜ່ອນ ແມ່ນ ການຂາຍສິນຄ້າ ໂດຍຜູ້ຊື້ຈ່າຍຄ່າສິນຄ້າເປັນງວດ ຊຶ່ງຜູ້ຊື້ໄດ້ກຳມະສິດໃນສິນຄ້າທີ່ຊື້ນັ້ນ ນັບແຕ່ເວລາທີ່ຜູ້ຂາຍໄດ້ມອບສິນຄ້າໃຫ້ເປັນຕົ້ນໄປ. ຖ້າສິນຄ້ານັ້ນ ຫາກຍັງຕ້ອງຈົດທະບຽນ ຜູ້ຊື້ໄດ້ກຳມະສິດ ນັບແຕ່ເວລາຈົດທະບຽນເປັນຕົ້ນໄປ.

ໃນກໍລະນີຜູ້ຊື້ຫາກຈ່າຍບໍ່ຄົບຖ້ວນ ແລະ ທັນຕາມກຳນົດເວລາສາມງວດລຽນຕິດ ຜູ້ຂາຍມີສິດຍົກເລີກສັນຍາ ຫຼື ທວງເອົາເງິນທີ່ຄ້າງຈ່າຍ ນຳຜູ້ຊື້ໃຫ້ຄົບຖ້ວນ.

ການຂາຍສິນຄ້າເປັນເງິນຜ່ອນ ຕ້ອງປະຕິບັດຕາມລາຄາທີ່ໄດ້ຕົກລົງກັນໃນເວລາຂາຍນັ້ນ. ການປ່ຽນແປງລາຄາສິນຄ້າທີ່ຂາຍເປັນເງິນຜ່ອນ ໃນເວລາຕໍ່ມາກໍຈະບໍ່ພາໃຫ້ລາຄາທີ່ໄດ້ຕົກລົງກັນແລ້ວນັ້ນ ມີການປ່ຽນແປງແຕ່ຢ່າງໃດ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ກ່ຽວກັບ ການຂາຍສິນຄ້າເປັນເງິນຜ່ອນນີ້ແມ່ນແຕກຕ່າງຈາກການຊື້ຂາຍທົ່ວໄປຊຶ່ງຜູ້ຂາຍບໍ່ໄດ້ບັງຄັບໃຫ້ຜູ້ຊື້ຕ້ອງຈ່າຍລາຄາສິນຄ້າຄົບຖ້ວນກ່ອນການນຳໃຊ້ພຽງແຕ່ໃຫ້ຜູ້ຊື້ໄດ້ຈ່າຍສ່ວນໃດສ່ວນໜຶ່ງກ່ອນກໍສາມາດເປັນເຈົ້າກຳມະສິດ. ສ່ວນທີ່ຍັງເຫຼືອຜູ້ຊື້ຕ້ອງຈ່າຍ ພາຍຫຼັງຕາມກຳນົດເວລາທີ່ຜູ້ຂາຍ ແລະ ຜູ້ຊື້ຕົກລົງກັນ. ລາຄາສິນຄ້າທີ່ປ່ຽນແປງໃນໄລຍະຕໍ່ມາຈະບໍ່ກະທົບຕໍ່ລາຄາທີ່ໄດ້ຕົກລົງກັນໃນເວລາຊື້ຂາຍໃນເບື້ອງຕົ້ນ. ກໍລະນີ ຜູ້ຊື້ຫາກຄ້າງຈ່າຍຕາມການຕົກລົງ ແລ້ວຜູ້ຂາຍສາມາດທວງເງິນນຳຜູ້ຊື້ ຫຼື ຍົກເລີກສັນຍາດັ່ງກ່າວໄດ້; ການປ່ຽນແປງລາຄາສິນຄ້າໃນໄລຍະຕໍ່ມາ ບໍ່ມີຜົນຕໍ່ລາຄາສິນຄ້າທີ່ໄດ້ຕົກລົງກັນໃນມື້ຊື້-ຂາຍ.
ຕົວຢ່າງ	**1. ກ** ຊື້ ໂທລະພາບສີ 32 ນິ້ວ 1 ໜ່ວຍ ຈາກ **ຂ** ເປັນເງິນຜ່ອນໃນລາຄາ 500.000 ກີບ ຕໍ່ງວດ (ເດືອນ) ເປັນ 5 ງວດ, ແຕ່ **ກ** ບໍ່ຈ່າຍ 3 ງວດລຽນຕິດ, **ຂ** ຈຶ່ງມີສິດຍົກເລີກສັນຍາ ຫຼື ທວງໃຫ້ **ກ** ຈ່າຍເງິນໃຫ້ຄົບຖ້ວນຕາມສັນຍາ. **2. ກ** ຊື້ລົດຈັກ ນຳ **ຂ** ໜຶ່ງຄັນ ໃນລາຄາ 12,000,000 ກີບ, ຕໍ່ມາ ລາຄາລົດຈັກໄດ້ມີການປັບຂຶ້ນ ເປັນ 14,000,000 ກີບ, ເມື່ອເປັນແນວນີ້ **ຂ** ຈະບໍ່ສາມາດ ໃຫ້ **ກ** ຈ່າຍເພີ່ມອີກ 2,000,000 ກີບ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 41 ວັກ 1 ຂອງກົດໝາຍວ່າດ້ວຍຂໍ້ຜູກພັນ ໃນ ແລະ ນອກສັນຍາ ປີ 2008, ມາເປັນວັກທີ 2 ຂອງມາດຕາ 408 ຂອງປະມວນກົດໝາຍແພ່ງ, ໂດຍຕັດຄຳວ່າ " **ທີ່** " ແລະ " **ເອົາສິນຄ້າທີ່ຂາຍນັ້ນຄືນ, ສ່ວນເງິນທີ່ຜູ້ຊື້ໄດ້ຈ່າຍໄປແລ້ວນັ້ນກໍຈະບໍ່ຖືກສົ່ງຄືນ** "; ວັກທີ 2 ແລະ 3 ຂອງມາດຕາ 41 ຂອງກົດໝາຍວ່າດ້ວຍຂໍ້ຜູກພັນ ໃນ ແລະ ນອກສັນຍາ ປີ 2008 ໄດ້ຕັດອອກ; ໄດ້ປັບປຸງວັກ 4 ຂອງມາດຕາ 41 ຂອງກົດໝາຍວ່າດ້ວຍຂໍ້ຜູກພັນ ໃນ ແລະ ນອກສັນຍາ ປີ 2008, ໃນຄຳວ່າ " **ໃນມື້** " ມາເປັນ " **ໃນເວລາ** " ການປັບປັບປຸງມາດຕານີ້ເພາະຢູ່ໃນສັງຄົມແມ່ນມີການຊື້ຂາຍ, ການແຂ່ງຂັນດ້ານການຄ້າຫຼາຍ. ດັ່ງນັ້ນ, ໃນການຊື້ຂາຍສິນຄ້າເປັນເງິນຜ່ອນນີ້ ໂດຍພື້ນຖານກໍອີງໃສ່ຫຼັກການຂອງສັນຍາຊື້ຂາຍ.

ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 453 ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2015.
ມາດຕາອ້າງອີງ	ມາດຕາ 414 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 409 ການຊື້ຂາຍສັງຫາລິມະຊັບທີ່ໄດ້ມາໂດຍບໍ່ຖືກຕ້ອງ

ບຸກຄົນທີ່ໄດ້ຊື້ສັງຫາລິມະຊັບດ້ວຍຄວາມບໍລິສຸດໃຈ ແມ່ນ ບຸກຄົນທີ່ເຊື່ອວ່າ ຕົນໄດ້ຊື້ສັງຫາລິມະຊັບທີ່ຖືກຕ້ອງຕາມກົດໝາຍ ຊຶ່ງສະແດງອອກດ້ວຍການຊື້ໃນລາຄາທີ່ເໝາະສົມຕາມຕະຫຼາດໃນເວລານັ້ນ, ຊື້ ແລະ ນຳໃຊ້ສັງຫາລິມະຊັບຢ່າງເປີດເຜີຍ, ລຽນຕິດ ແລະ ສະຫງົບແລ້ວ, ເຈົ້າຂອງຊັບຈະເອົາສັງຫາລິມະຊັບນັ້ນຄືນໄດ້ ກໍຕໍ່ເມື່ອຜູ້ກ່ຽວຫາກໄດ້ທົດແທນລາຄາທີ່ຜູ້ຊື້ໄດ້ຈ່າຍໄປແລ້ວນັ້ນ, ແຕ່ເຈົ້າຂອງຊັບ ກໍມີສິດຮ້ອງຟ້ອງ ຜູ້ທີ່ເອົາສັງຫາລິມະຊັບຂອງຕົນ ມາຂາຍຢ່າງຜິດກົດໝາຍນັ້ນ.

ບຸກຄົນທີ່ໄດ້ຊື້ສັງຫາລິມະຊັບດ້ວຍຄວາມບໍ່ບໍລິສຸດໃຈ ແມ່ນ ບຸກຄົນທີ່ຊື້ສັງຫາລິມະຊັບໂດຍຮູ້ ຫຼື ຄວນຮູ້ວ່າຕົນໄດ້ຊື້ສັງຫາລິມະຊັບທີ່ບໍ່ຖືກຕ້ອງຕາມກົດໝາຍ ຊຶ່ງອາດສະແດງອອກດ້ວຍການຊື້ໃນລາຄາທີ່ບໍ່ ເໝາະສົມຕາມທ້ອງຕະຫຼາດໃນເວລານັ້ນ, ຊື້ ແລະ ນຳໃຊ້ຊັບສິ່ງຂອງຢ່າງປິດລັບ, ບໍ່ລຽນຕິດ, ມີການທັກທ້ວງແລ້ວ, ເຈົ້າຂອງຊັບມີສິດເອົາສັງຫາລິມະຊັບນັ້ນຄືນ ໂດຍບໍ່ມີການທົດແທນຄ່າສັງຫາລິມະຊັບໃຫ້ແກ່ຜູ້ຊື້ແຕ່ຢ່າງໃດ. ຜູ້ຊື້ຈະຕໍ່ວ່າເອົາເງິນທີ່ຊື້ສັງຫາລິມະຊັບນັ້ນຄືນ ນຳຜູ້ຂາຍກໍໄດ້ ແຕ່ບໍ່ມີສິດຮ້ອງຟ້ອງ ຕໍ່ສານ.

ຈຸດປະສົງ	ເພື່ອກຳນົດກ່ຽວກັບ ການປົກປ້ອງສິດຂອງຜູ້ຊື້ດ້ວຍຄວາມບໍລິສຸດໃຈໃນເວລາທີ່ເຮັດສັນຍາ ແລະ ຄວາມຮັບຜິດຊອບຂອງຜູ້ຊື້ດ້ວຍຄວາມບໍ່ບໍລິສຸດໃຈ.
ຕົວຢ່າງ	**1. ກ** ໄດ້ຈູງຄວາຍແມ່ລູກອ່ອນຄູ່ໜຶ່ງ ມາຂາຍໃຫ້ **ຂ** ໃນລາຄາ 9,000,000 ກີບ. **ຂ** ເຫັນວ່າລາຄານີ້ກໍແມ່ນລາຄາທີ່ຊື້ຂາຍກັນໃນທ້ອງຕະຫຼາດໃນຊ່ວງໄລຍະນີ້ ແລະ **ກ** ກໍຢັ້ງຢືນວ່າຄວາຍແມ່ລູກອ່ອນນີ້ແມ່ນຄວາຍຂອງ **ກ** ແທ້. ສະນັ້ນ, **ຂ** ຈຶ່ງໄດ້ຕົກລົງຊື້ຄວາຍນຳ **ກ**. ພາຍຫຼັງຊື້ໄດ້ຄວາຍແມ່ລູກອ່ອນນີ້ແລ້ວ **ຂ** ກໍໄດ້ນຳໃຊ້ຢ່າງເປີດເຜີຍ. ຕໍ່ມາ **ຄ** ເຫັນວ່າ **ຂ** ນຳໃຊ້ຄວາຍແມ່ລູກອ່ອນຂອງ **ຄ, ຄ** ຈຶ່ງໄດ້ຖາມລາຍລະອຽດທີ່ມາ ແລະ ທວງເອົາຄວາຍແມ່ລູກອ່ອນຄືນ. ໃນກໍລະນີນີ້ **ຄ** ຈະເອົາຄວາຍແມ່ລູກອ່ອນຄູ່ນີ້ຄືນໄດ້ກໍຕໍ່ເມື່ອ ໄດ້ຈ່າຍເງິນ 9,000,000 ກີບ ໃຫ້ **ຂ,** ແລ້ວ **ຄ** ຈຶ່ງໄປທວງເອົາຄືນນຳ **ກ**. ຖ້າ **ກ** ບໍ່ໃຊ້ແທນ 9,000,000 ກີບ ຄືນໃຫ້ **ຄ, ຄ** ສາມາດຮ້ອງຟ້ອງຕໍ່ສານ ໃຫ້ສານພິຈາລະນາຕັດສິນຕາມກົດໝາຍ. **2. ຂ** ຂາຍລົດຈັກໜຶ່ງຄັນໃຫ້ **ກ** ລາຄາ 4,000,000 ກີບ ໂດຍບໍ່ມີໃບທະບຽນລົດຈັກ, ແຕ່ຄຸນນະພາບລົດຈັກຄັນນີ້ຖ້າຊື້ຂາຍຕົວຈິງໃນທ້ອງຕະຫຼາດ ແມ່ນ 10,000,000 ກີບ. **ກ** ກໍຮູ້ແລ້ວວ່າລົດຈັກທີ່ **ຂ** ຂາຍອາດບໍ່ແມ່ນກຳມະສິດຂອງ **ຂ** ແຕ່ **ກ** ກໍມີເຈດຕະນາຊື້ ແລະ ນຳໃຊ້ຢ່າງປິດລັບ ຄືຂັບຂີ່ຍາມກາງຄືນເທົ່ານັ້ນ. ຕໍ່ມາ **ຄ** ຈຶ່ງຮູ້ວ່າລົດຈັກ ທີ່ **ກ** ຄອບຄອງ ແລະ ນຳໃຊ້ນັ້ນແມ່ນລົດຂອງ **ຄ**. ໃນກໍລະນີນີ້ **ຄ** ສາມາດທວງໃຫ້ **ກ** ສົ່ງລົດຈັກຄັນນີ້ຄືນໃຫ້ແກ່ **ຄ**. ໂດຍທີ່ **ຄ** ບໍ່ໄດ້ທົດແທນເງິນ 4,000,000 ກີບ ທີ່ **ກ** ໄດ້ຈ່າຍໄປແລ້ວນັ້ນຄືນໃຫ້ແກ່ **ກ**. ສ່ວນ **ກ** ມີສິດທວງເງິນ 4,000,000 ກີບຄືນຈາກ **ຂ** ໄດ້ ແຕ່ **ກ** ບໍ່ມີສິດຮ້ອງຟ້ອງຕໍ່ສານ.
ເຫດຜົນໃນການປັບປຸງ	ມາດຕານີ້ແມ່ນໄດ້ປັບປຸງມາຈາກ ມາດຕາ 42 ການຊື້ຊັບສິ່ງຂອງການໄດ້ມາຢ່າງຜິດກົດໝາຍ ຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ປີ 2008 ເຊັ່ນ ຄຳວ່າ ຊັບສິ່ງຂອງ ມາເປັນ ສັງຫາລິມະຊັບ.

ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 453 “**ການຊື້ຂາຍໂດຍຈ່າຍນຳຫຼັງການສົ່ງມອບ ຫຼື ຜ່ອນຈ່າຍ**” ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2015; ມາດຕາ 192 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 243 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 410 ການນຳສົ່ງສິນຄ້າ ຫຼື ຊັບສົ່ງຂອງທີ່ຂາຍ

ຜູ້ຊື້ ແລະ ຜູ້ຂາຍ ສາມາດຕົກລົງກ່ຽວກັບການນຳສົ່ງສິນຄ້າ ຫຼື ຊັບສົ່ງຂອງທີ່ຂາຍ. ໃນກໍລະນີທີ່ບໍ່ໄດ້ ຕົກລົງໃຫ້ຜູ້ຂາຍນຳສົ່ງສິນຄ້າ ຫຼື ຊັບສົ່ງຂອງທີ່ຂາຍນັ້ນໄປຮອດບ່ອນຢູ່ຂອງຜູ້ຊື້ ຫຼື ສະຖານທີ່ໃດໜຶ່ງ ຕາມທີ່ໄດ້ຕົກລົງກັນ ແລະ ຜູ້ຊື້ຕ້ອງຮັບເອົາສິນຄ້າ ຫຼື ຊັບສົ່ງຂອງ ທີ່ນຳສົ່ງມາໃຫ້ຕົນ. ສ່ວນການໃຊ້ຈ່າຍຄ່ານຳສົ່ງນັ້ນ ແມ່ນຂຶ້ນກັບການຕົກລົງຂອງຄູ່ສັນຍາ.

ຖ້າຜູ້ຂາຍ ຫາກບໍ່ນຳສົ່ງສິນຄ້າ ຫຼື ຊັບສົ່ງຂອງທີ່ຂາຍ ຕາມກຳນົດເວລາ ຊຶ່ງໄດ້ຕົກລົງກັນແລ້ວນັ້ນ ຜູ້ຊື້ຈະບໍ່ຮັບເອົາສິນຄ້າ ຫຼື ຊັບສົ່ງຂອງນັ້ນກໍໄດ້.

ໃນກໍລະນີທີ່ຜູ້ຊື້ ຫາກໄດ້ຈ່າຍຄ່າສິນຄ້າ, ຄ່ານຳສົ່ງແລ້ວ ຜູ້ຊື້ ກໍຈະໃຫ້ຜູ້ຂາຍຈ່າຍຄ່າປ່ວຍການ ຊັບແກ່ຕົນ ຕາມຄວາມເໝາະສົມກໍໄດ້.

ຖ້າຜູ້ຂາຍ ຫາກໄດ້ນຳສົ່ງສິນຄ້າ ຫຼື ຊັບສົ່ງຂອງ ທີ່ຂາຍນັ້ນ ບໍ່ຄົບຕາມປະລິມານ, ບໍ່ຄົບຖ້ວນ, ບໍ່ມີຄຸນນະພາບ ຕາມທີ່ໄດ້ຕົກລົງຊື້ຂາຍກັນ, ຜູ້ຊື້ ຈະບໍ່ຮັບເອົາ ແລະ ຈະບໍ່ຈ່າຍຄ່າສິນຄ້ານັ້ນກໍໄດ້. ຖ້າຜູ້ຊື້ ຫາກໄດ້ຈ່າຍຄ່າສິນຄ້ານັ້ນແລ້ວ, ຜູ້ຂາຍ ຕ້ອງສົ່ງເງິນຄືນ ແລະ ອາດຮັບຜິດຊອບຄ່າເສຍຫາຍ.

ຈຸດປະສົງ	ເພື່ອກຳນົດກ່ຽວກັບ ພັນທະໃນການນຳສົ່ງສິນຄ້າທີ່ຂາຍ ໂດຍປົກ ກະຕິ ຈະ ແມ່ນພັນທະຂອງ ຜູ້ຂາຍເປັນ ຜູ້ນຳສົ່ງໃຫ້ ຜູ້ຊື້ ຕາມວັນເວລາ, ສະຖານທີ່, ຄຸນນະພາບ ຫຼື ນຳສົ່ງສິນຄ້າຕາມການຕົກລົງກັນ.
ຕົວຢ່າງ	**1.** ໃນວັນທີ 18 ກັນຍາ 2018. **ກ** ໄດ້ຊື້ ໂທລະພາບສີ 60 ນີ້ວ ນຳ ຮ້ານ ຂາຍເຄື່ອງ **ຂ**, ລາຄາ 10.000.000 ກີບ ໂດຍຕົກລົງກັນໃຫ້ **ຂ** ຈັດສົ່ງ ໂທລະພາບໃຫ້ **ກ** ຢູ່ ເຮືອນ ຂອງ **ກ** ໃນເວລາ 16: 00 ໂມງ ຂອງ ວັນທີ ເດືອນ ປີ ດັ່ງກ່າວ. **ຂ** ກໍຕ້ອງຈັດສົ່ງ ໂທລະພາບ ໜ່ວຍນີ້ ໃຫ້ **ກ** ພ້ອມເຄື່ອງປະກອບຄົບຊຸດ ຕາມການຕົກລົງກັນ. ຖ້າ **ຂ** ປະຕິບັດບໍ່ໄດ້ ຕາມທີ່ໄດ້ຕົກລົງ ເປັນຕົ້ນ ຊັກຊ້າໃນການນຳສົ່ງ ຫຼື ບໍ່ເອົາ ເຄື່ອງຄວບຄຸມ (remote control) ໄປພ້ອມ ຫຼື ຢ່າງອື່ນ **ຂ** ຈະໄດ້ຮັບຜິດຊອບຕໍ່ການ ລະເມີດສັນຍາ. **2.** ໃນວັນທີ 1 ມັງກອນ 2019 **ກ** ໄດ້ສັ່ງຊື້ໄຂ່ໄກ່ລາດ ນຳ **ຂ** ຈຳນວນ 100.000 ໜ່ວຍ ໃນລາຄາໜ່ວຍລະ 1,000 ກີບ ແລະ **ຂ** ຕ້ອງໄດ້ສົ່ງ ໄຂ່ຈຳນວນດັ່ງກ່າວໃຫ້ **ກ** ຢ່າງຊ້າ ບໍ່ໃຫ້ກາຍເວລາ 12: 00 ໂມງທ່ຽງ ຂອງ ວັນທີ 20 ມັງກອນ 2019 ເພື່ອນຳໃຊ້ເຂົ້າໃນງານດອງ. ໂດຍ **ກ** ຈ່າຍລ່ວງໜ້າ 7,000,000 ກີບ. ຈົນມາຮອດ ວັນທີ 22 ມັງກອນ 2019 **ຂ** ຈຶ່ງໄດ້ສົ່ງມາຮອດເຮືອນຂອງ **ກ** (ໂດຍບໍ່ມີສິ່ງກີດຂວາງໃດເກີດຂຶ້ນໃນ ລະຫວ່າງການຂົນສົ່ງ) ໃນກໍລະນີນີ້ ເຫັນວ່າການປະຕິບັດສັນຍາຂອງ **ຂ** ບໍ່ ຖືກຕ້ອງຕາມກຳນົດເວລາ ແລະ ທັງປະຕິບັດສັນຍາບໍ່ຄົບຖ້ວນຕາມທີ່ໄດ້ ຕົກລົງກັນ. ສະນັ້ນ, **ກ** ສາມາດປະຕິເສດຕໍ່ການປະຕິບັດສັນຍາຂອງ **ຂ** ພ້ອມທັງໃຫ້ **ຂ** ຈ່າຍຄ່າເສຍຫາຍອີກ.

	3. ໃນວັນທີ 1 ມັງກອນ 2020 **ກ** ໄດ້ເຮັດສັນຍາຊື້ຂາຍໄກ່ປີ້ງ ນຳ ຮ້ານ **ຂ** ຈຳນວນ 100 ໂຕໃນລາຄາໂຕລະ 50.000 ກີບ, ໂດຍໃຫ້ຮ້ານ **ຂ** ນຳມາສົ່ງຢູ່ເຮືອນຂອງ **ກ.** ໃນວັນທີ 5 ມັງກອນ 2020 **ກ** ໄດ້ຈ່າຍກ່ອນໃຫ້ **ຂ** ເປັນເງິນຈຳນວນ 4.000.000 ກີບ. ເພື່ອຈະເອົາມາຂາຍໃຫ້ **ຄ** ໃນວັນທີ 6 ມັງກອນ 2020 ໂຕລະ 70.000 ກີບ ໂດຍ **ຄ** ໄດ້ຈ່າຍກ່ອນຈຳນວນ 6.000.000 ກີບ. ແຕ່ມາຮອດວັນທີ 5 ມັງກອນ 2020 ຮ້ານ **ຂ** ກໍບໍ່ໄດ້ສົ່ງໄກ່ປີ້ງໃຫ້ **ກ.** ໃນກໍລະນີນີ້ ຮ້ານ **ຂ** ຕ້ອງສົ່ງເງິນຄືນໃຫ້ **ກ** ແລະ **ກ** ກໍມີສິດທວງເອົາຄ່າປ່ວຍການ ຫຼື/ແລະ ຄ່າປ່ວຍການຊັບທີ່ **ກ** ຄວນຈະໄດ້ຈາກ ຮ້ານ **ຂ.** ເນື່ອງຈາກວ່າຖ້າ ຮ້ານ **ຂ** ສົ່ງໄກ່ໃຫ້ **ກ** ຕາມກຳນົດ **ກ** ຕ້ອງໄດ້ກຳໄລຈາກໄກ່ປີ້ງໂຕລະ 20.000 ກີບ ຈາກ **ຄ.** **4.** ໃນວັນທີ 10 ມັງກອນ 2021 **ກ** ໄດ້ສັ່ງຊື້ໄຂ່ໄກ່ລາດ ນຳ **ຂ** ຈຳນວນ 10.000 ໜ່ວຍ ໃນລາຄາໜ່ວຍລະ 500 ກີບ ແລະ ໄດ້ເຮັດສັນຍາວ່າ **ຂ** ຕ້ອງນຳສົ່ງໄຂ່ຈຳນວນດັ່ງກ່າວໃຫ້ **ກ** ຢ່າງຊ້າ ບໍ່ໃຫ້ກາຍ ວັນທີ 20 ມັງກອນ2021. ໂດຍ **ກ** ຈ່າຍລ່ວງໜ້າ 3,000,000 ກີບ. ແລ້ວມາຮອດວັນທີ 20 ມັງກອນ 2021 **ຂ** ກໍໄດ້ສົ່ງໄຂ່ໄກ່ມາຮອດເຮືອນຂອງ **ກ** ແລ້ວ. **ກ** ໄຂເບິ່ງມີໄຂ່ໄກ່ພັນ 10.000 ໜ່ວຍ. ໃນກໍລະນີນີ້ ເຫັນວ່າການປະຕິບັດສັນຍາຂອງ **ຂ** ບໍ່ມີຄຸນນະພາບຕາມທີ່ໄດ້ຕົກລົງກັນ. ສະນັ້ນ, **ກ** ບໍ່ຮັບເອົາໄຂ່ທັງໝົດນັ້ນ ແລະ ພ້ອມທັງໃຫ້ **ຂ** ຕ້ອງສົ່ງເງິນທີ່ຈ່າຍໄປແລ້ວນັ້ນຄືນ.
ເຫດຜົນໃນການປັບປຸງ	ມາດຕານີ້ໄດ້ມີການປັບປຸງເນື້ອໃນມາດຕາ 43 ວັກ1 ແລະ 2 ການນຳສົ່ງສິນຄ້າ ຫຼື ຊັບສົ່ງຂອງທີ່ຂາຍ ຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ປີ 2008, ເນື້ອໃນມາດຕາ 43 ຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນ ແລະ ນອກສັນຍາ ປີ 2008, ຂຽນບໍ່ທັນຈະແຈ້ງເທົ່າທີ່ຄວນກ່ຽວກັບຫຼັກການ ການນຳສົ່ງສິນຄ້າທີ່ຂາຍ ຊຶ່ງ ຜູ້ຊື້ ແລະ ຜູ້ຂາຍ ສາມາດຕົກລົງກັນໄດ້ ໝາຍຄວາມວ່າ ໃຫ້ສິດແກ່ ສອງຝ່າຍກ່ອນ ເມື່ອບໍ່ໄດ້ຕົກລົງແລ້ວ ຜູ້ຂາຍ ຈຶ່ງຕ້ອງສົ່ງໃຫ້ ຜູ້ຊື້ ຕາມວັນເວລາແລະ ສະຖານທີ່ ຂອງ ຜູ້ຊື້ ສະນັ້ນ ຈຶ່ງໄດ້ປັບປຸງມາດຕານີ້ ໃຫ້ມີຄວາມກະຈ່າງແຈ້ງຂຶ້ນຕື່ມ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 435 "**ສະຖານທີ່ໃນການສົ່ງມອບ**" ຂອງປະມວນກົດໝາຍແພ່ງ ຫວຽດ ນາມ ປີ 2015; ມາດຕາ 415, 416 ແລະ 492 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 381 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	1) ຍັງສືບຕໍ່ຄົ້ນຄວ້າ. ກ່ຽວກັບຄວາມໝາຍວັກສອງ ຂອງມາດຕານີ້ ເພາະເພື່ອຈະປະຕິເສດໄດ້ນັ້ນ ແມ່ນສະເພາະກໍລະນີທີ່ ຖ້າຫາກລ່າຊ້າແລ້ວ ແມ່ນຖືວ່າການປະຕິບັດບໍ່ມີຄວາມໝາຍ. ສະນັ້ນ ວັກ 2 ຈະຖືກນຳໃຊ້ບໍ່? 1) ຍັງສືບຕໍ່ຄົ້ນຄວ້າ. ກ່ຽວກັບ ຄວາມໝາຍວັກສີ່ ຂອງມາດຕານີ້ເຊັ່ນ ບໍ່ຄົບຕາມປະລິມານ, ບໍ່ຄົບຖ້ວນ, ບໍ່ມີຄຸນນະພາບ ຕາມການຕົກລົງກັນ. ຜູ້ຊື້ຈະບໍ່ຮັບເອົາທັງໝົດ ຫຼື ບາງສ່ວນ. ດັ່ງໃນກໍລະນີ ຕົວຢ່າງ 4: ຖ້າໄຂ່ໄກ່ລາດ 8,000 ໜ່ວຍ ແລະ 2,000 ໜ່ວຍເປັນໄຂ່ໄກ່ພັນ. ຜູ້ຊື້ຈະບໍ່ຮັບເອົາໄຂ່ທັງໝົດ ຫຼື ບໍ່ຮັບເອົາແຕ່ 2,000 ໜ່ວຍທີ່ບໍ່ຖືກຕາມຄຸນນະພາບ.

ຂ. ສັນຍາແລກປ່ຽນ

ມາດຕາ 411 ສັນຍາແລກປ່ຽນ

ສັນຍາແລກປ່ຽນ ແມ່ນ ການຕົກລົງຂອງຄູ່ສັນຍາ, ຊຶ່ງຝ່າຍໜຶ່ງໄດ້ເອົາຊັບສິ່ງຂອງທີ່ເປັນກຳມະສິດ ຂອງຕົນມອບໃຫ້ອີກຝ່າຍໜຶ່ງ ແລະ ຝ່າຍນີ້ ກໍໄດ້ເອົາຊັບສິ່ງຂອງອັນອື່ນ ທີ່ເປັນກຳມະສິດຂອງຕົນຕອບ ແທນໃຫ້.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ກ່ຽວກັບ ສິດ ແລະ ພັນທະ ຂອງຄູ່ສັນຍາແລກປ່ຽນ.
ຕົວຢ່າງ	**1.** **ກ** ໄດ້ຕົກລົງກັນກັບ **ຂ** ແລກປ່ຽນຊັບນຳກັນ ໂດຍ **ກ** ໄດ້ເອົາກີຕາ ຈຳນວນ 1 ໜ່ວຍທີ່ເປັນກຳມະສິດຂອງຕົນມອບໃຫ້ **ຂ** ແລະ **ຂ** ກໍໄດ້ເອົາຄອມພິວເຕີໂນດບຸກ 1 ໜ່ວຍທີ່ເປັນກຳມະສິດຂອງຕົນຕອບແທນຄືນ **ກ.** **2.** **ກ** ແລະ **ຂ** ໄດ້ມີການຕົກລົງແລກປ່ຽນຄວາຍກັນ. ໂດຍ **ກ** ເອົາຄວາຍເຖິກ ໜຶ່ງໂຕ (ອາຍຸ ສີ່ປີ) ໃຫ້ **ຂ** ແລະ **ຂ** ເອົາຄວາຍແມ່ໜຶ່ງໂຕ (ອາຍຸ ສອງປີ) ໃຫ້ **ກ.** **3.** **ກ** ມີຄອມພິວເຕີ ໜຶ່ງເຄື່ອງ ລາຄາ 9.000.000 ກີບ , ສ່ວນ **ຂ** ມີ ໂທລະສັບໜຶ່ງເຄື່ອງ ລາຄາ 11.000.000 ກີບ ທັງສອງໄດ້ມີການຕົກລົງ ແລກປ່ຽນຊັບສິ່ງຂອງນຳກັນ ໂດຍຮູ້ວ່າລາຄາຂອງຊັບມີການຫຼຸດລົ້ນກັນ ແຕ່ທັງສອງກໍເຫັນດີແລກປ່ຽນ.
ເຫດຜົນໃນການຮັກສາເນື້ອ ໃນເດີມ	ມາດຕານີ້ແມ່ນຍັງຮັກສາເນື້ອໃນເດີມຂອງ ມາດຕາ 44 ສັນຍາແລກປ່ຽນ ຂອງ ກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ປີ 2008.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງຂອງປະເທດອື່ນ	ມາດຕາ 455 "**ສັນຍາແລກປ່ຽນຊັບ**" ຂອງປະມວນກົດໝາຍແພ່ງ ຫວຽດນາມ ປີ 2015; ມາດຕາ 586 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 412 ແລະ 413 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 412 ການເພີ່ມເງິນເຂົ້າໃນການແລກປ່ຽນ

ໃນການແລກປ່ຽນນັ້ນ ຄູ່ສັນຍາຝ່າຍໃດໜຶ່ງ ອາດເພີ່ມເງິນເຂົ້າ ເມື່ອຊັບສິ່ງຂອງຂອງຕົນ ທີ່ແລກ ປ່ຽນນັ້ນ ຫາກມີມູນຄ່າຕ່ຳກວ່າມູນຄ່າຊັບສິ່ງຂອງ ຂອງອີກຝ່າຍໜຶ່ງ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ກ່ຽວກັບ ສິດ ແລະ ພັນທະ ສ່ວນໃດໜຶ່ງຂອງຄູ່ສັນຍາອີກຝ່າຍ ຕ້ອງໄດ້ເພີ່ມເຕີມຊັບໃດໜຶ່ງໃຫ້ແກ່ອີກຝ່າຍເພື່ອມີຄວາມດຸ່ນດ່ຽງທາງຄຸນຄ່າ ຂອງຊັບທີ່ແລກປ່ຽນນັ້ນ.
ຕົວຢ່າງ	**1.** **ຂ** ຕົກລົງເອົາລົດຈັກຂອງຕົນແລກປ່ຽນເອົາກີຕາກັບ **ດ**, ແຕ່ຊັບຂອງ **ດ** ມີ ມູນຄ່າຕ່ຳກ່ວາ. ສະນັ້ນ **ດ** ຕ້ອງເພີ່ມເງິນເຂົ້າຕື່ມຕາມການຕົກລົງກັນ **2.** **ກ** ໄດ້ເອົາລົດຈັກ (ມູນຄ່າ 8,000,000 ກີບ) ມາແລກປ່ຽນ ງົວໂຕໜຶ່ງ ຂອງ **ຂ** (ມູນຄ່າ 4,000,000 ກີບ). ເຫັນວ່າມູນຄ່າຊັບຂອງ **ຂ** ຕ່ຳກວ່າ ຊັບ ຂອງ **ກ.** ດັ່ງນັ້ນ, **ຂ** ຈຳເປັນຕ້ອງເພີ່ມເງິນ 4,000,000 ກີບ ຕື່ມໃຫ້ **ກ.**

ເຫດຜົນໃນການຮັກສາເນື້ອໃນເດີມ	ມາດຕານີ້ຍັງຮັກສາເນື້ອໃນເດີມຂອງມາດຕາ 45 ການເພີ່ມເງື່ນເຂົ້າໃນການແລກປ່ຽນ ຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນ ແລະ ນອກສັນຍາ ປີ 2008.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 456 "**ການຊໍາລະຊັບທີ່ມີມູນຄ່າແຕກຕ່າງກັນ**" ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2015.
ມາດຕາອ້າງອີງ	ມາດຕາ 411 ແລະ 413 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 413 ລະບຽບການກ່ຽວກັບສັນຍາແລກປ່ຽນ

ລະບຽບການກ່ຽວກັບສັນຍາແລກປ່ຽນ ໃຫ້ປະຕິບັດຄືກັນກັບລະບຽບການຂອງສັນຍາຊື້ຂາຍ.

ສັນຍາແລກປ່ຽນ ຈະມີຜົນສັກສິດ ເມື່ອຄູ່ສັນຍານັ້ນ ໄດ້ມອບຊັບສິ່ງຂອງໃຫ້ແກ່ກັນແລ້ວ.

ຈຸດປະສົງ	ເພື່ອກໍານົດໃຫ້ຮູ້ກ່ຽວກັບ ວິທີການໃນການຈັດຕັ້ງປະຕິບັດໃນການແລກປ່ຽນ ແລະ ການມີຜົນສັກສິດຂອງສັນຍາແລກປ່ຽນ.
ຕົວຢ່າງ	**1. ກ** ໄດ້ຕົກລົງກັນກັບ **ຂ** ແລກປ່ຽນຊັບນໍາກັນ ໂດຍ **ກ** ໄດ້ເອົາກີຕາຈໍານວນ 1 ໜ່ວຍທີ່ເປັນກໍາມະສິດຂອງຕົນມອບໃຫ້ **ຂ** ແລະ **ຂ** ກໍໄດ້ເອົາຄອມພິວເຕີໂນດບุກ 1 ໜ່ວຍທີ່ເປັນກໍາມະສິດຂອງຕົນຕອບແທນຄືນແກ່ **ກ**. ໃນເມື່ອຕ່າງຝ່າຍກໍໄດ້ມອບຊັບໃຫ້ກັນແລ້ວສັນຍາກໍມີຜົນສັກສິດ. **2.** ອີງໃສ່ຕົວຢ່າງ 2 ຂອງມາດຕາ 412 ຂອງບົດອະທິບາຍ ປະມວນກົດໝາຍແພ່ງ. ຈະມີຜົນສັກສິດ ຫຼື ເປັນເຈົ້າກໍາມະສິດຕໍ່ຊັບດັ່ງກ່າວ ກໍຕໍ່ເມື່ອ **ກ** ໄດ້ມອບລົດຈັກ ແລະ ທະບຽນລົດ ເປັນຊື່ **ຂ**, ແລະ **ຂ** ໄດ້ມອບງົວໂຕທີ່ໄດ້ຕົກລົງກັນແລກປ່ຽນນັ້ນໃຫ້ແກ່ **ກ**.
ເຫດຜົນໃນການຮັກສາເນື້ອໃນເດີມ	ມາດຕານີ້ຮັກສາເດີມເນື້ອໃນມາດຕາ 46 ສັນຍາແລກປ່ຽນ ຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນ ແລະ ນອກສັນຍາປີ 2008, ສັນຍາແລກປ່ຽນມີຜົນສັກສິດ ນັບແຕ່ມື້ມີການມອບຊັບສິ່ງຂອງໃຫ້ແກ່ກັນຫຼື ນັບແຕ່ຝ່າຍໜຶ່ງໄດ້ມອບຊັບສິ່ງຂອງໃຫ້ແລ້ວ ແຕ່ອີກຝ່າຍໜຶ່ງຍັງບໍ່ທັນໄດ້ມອບ. ໃນກໍລະນີທີ່ມີການຕົກລົງກັນແລ້ວ ຕ່າງຝ່າຍຕ່າງຍັງບໍ່ທັນໄດ້ມອບຊັບໃຫ້ແກ່ກັນ ຖືວ່າສັນຍາຍັງບໍ່ມີຜົນສັກສິດ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 586 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ; ມາດຕາ 519 ຂອງປະມວນກົດໝາຍແພ່ງ ແລະ ພານິດໄທ.
ມາດຕາອ້າງອີງ	ມາດຕາ 406, 409, 410, 411 ແລະ 412 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ຄ. ສັນຍາເຊົ່າຊື້

ມາດຕາ 414 ສັນຍາເຊົ່າຊື້

ສັນຍາເຊົ່າຊື້ ແມ່ນ ການຕົກລົງຂອງຄູ່ສັນຍາ, ຊຶ່ງຜູ້ໃຫ້ເຊົ່າຊື້ເອົາຊັບສິ່ງຂອງ ຂອງຕົນ ໃຫ້ຜູ້ເຊົ່າຊື້ ເຊົ່າ ແລະ ຜູ້ເຊົ່າຊື້ຈະໄດ້ກຳມະສິດໃນຊັບສິ່ງຂອງທີ່ເຊົ່າຊື້ ເມື່ອຕົນໄດ້ຈ່າຍຄ່າຊັບສິ່ງຂອງນັ້ນ ຢ່າງຄົບຖ້ວນຕາມຈຳນວນງວດທີ່ໄດ້ຕົກລົງກັນ.

ລາຄາເຊົ່າຊື້ ໃຫ້ປະຕິບັດຕາມທີ່ໄດ້ຕົກລົງກັນ ໃນເວລາເຮັດສັນຍາເຊົ່າຊື້ນັ້ນ.

ສັນຍາເຊົ່າຊື້ ຕ້ອງເຮັດເປັນລາຍລັກອັກສອນ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ຈຽວກັບ ພັນທະຂອງຜູ້ໃຫ້ເຊົ່າຊື້ ແລະ ການໄດ້ກຳມະ ສິດຂອງ ຜູ້ເຊົ່າຊື້ ເມື່ອປະຕິບັດພັນທະຄົບຖ້ວນ ຕາມລາຄາທີ່ຕົກລົງກັນໂດຍເປັນລາຍ ລັກອັກສອນ.
ຕົວຢ່າງ	**1.** ບໍລິສັດ **ກ** ໄດ້ໃຫ້ **ຂ** ເຊົ່າຊື້ລົດກະບະໃນລາຄາ 300.000.000 ກີບ ໂດຍ **ຂ** ຈ່າຍກ່ອນ 10%, ສ່ວນເຫຼືອ 90% **ຂ** ຈ່າຍເປັນງວດຈົນຄົບຖ້ວນຕາມ ຈຳນວນ **ຂ** ຈຶ່ງຈະໄດ້ກຳມະສິດໃນລົດກະບະຄັນດັ່ງກ່າວ. **2. ກ** ເຊົ່າຊື້ ທີ່ດິນ 2 ເຮັກຕາ ນຳ **ຂ** ໃນລາຄາ 120.000.000 ກີບ ໂດຍ **ກ** ຈ່າຍຄ່າເຊົ່າຊື້ກ່ອນຈຳນວນ 50.000.000 ກີບ, ສ່ວນທີ່ເຫຼືອ **ກ** ຈະຈ່າຍ ເປັນງວດ(ເດືອນ) ໃຫ້ແກ່ **ຂ** ຈົນຄົບຖ້ວນ. **ກ** ຈະເປັນເຈົ້າກຳມະສິດໃນ ທີ່ດິນຕອນດັ່ງກ່າວ ເມື່ອ **ກ** ໄດ້ຊຳລະເງິນຄົບຖ້ວນຕາມງວດທີ່ໄດ້ຕົກລົງ ກັນ ແລະ ໄດ້ໄປຈົດທະບຽນເປັນເຈົ້າກຳມະສິດໃນທີ່ດິນທີ່ເຊົ່າຊື້.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງຂຶ້ນໃໝ່ໂດຍຜັນຂະຫຍາຍມາຈາກ ມາດຕາ 41 ການຂາຍສິນຄ້າ ເປັນເງິນຜ່ອນ ຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນ ແລະ ນອກສັນຍາ ປີ 2008 ແລະ ອີງໃສ່ສະພາບການຂະຫຍາຍຕົວຂອງເສດຖະກິດ-ສັງຄົມ.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງຂອງປະເທດອື່ນ	ມາດຕາ 572, 573 ແລະ 574 ຂອງປະມວນກົດໝາຍແພ່ງ ແລະ ພານິດໄທ; ມາດຕາ 575 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 408, 415-417 ແລະ 369 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 415 ສິດ ແລະ ພັນທະຂອງຜູ້ໃຫ້ເຊົ່າຊື້

ຜູ້ໃຫ້ເຊົ່າຊື້ ມີສິດ ດັ່ງນີ້:

1. ທວງເອົາຄ່າເຊົ່າຊື້ຊັບສິ່ງຂອງຕາມງວດທີ່ໄດ້ຕົກລົງກັນ;
2. ຍົກເລີກສັນຍາ ແລະ ທວງເອົາຊັບສິ່ງຂອງນັ້ນຄືນ ໃນກໍລະນີທີ່ຜູ້ເຊົ່າຊື້ໄດ້ຄ້າງຈ່າຍ ເປັນ ເວລາສາມງວດລຽນຕິດ ແລະ ພາຍຫຼັງທີ່ຜູ້ໃຫ້ເຊົ່າຊື້ໄດ້ສົ່ງໜັງສືທວງ ແລະ ຜູ້ເຊົ່າຊື້ທີ່ຄ້າງຈ່າຍນັ້ນບໍ່ໄດ້ ປະຕິບັດຕາມກຳນົດເວລາ ສາມສິບວັນ ນັບແຕ່ວັນໄດ້ຮັບໜັງສືທວງເປັນຕົ້ນໄປ, ສ່ວນເງິນຄ່າຊັບສິ່ງຂອງ ທີ່ໄດ້ຈ່າຍໄປແລ້ວນັ້ນ ຈະບໍ່ສົ່ງຄືນ; ໃນກໍລະນີທີ່ຊັບສິ່ງຂອງ ມີການເປ່ເພ ເສຍຫາຍ ຍ້ອນຄວາມຜິດຂອງຜູ້ ເຊົ່າຊື້, ຜູ້ໃຫ້ເຊົ່າຊື້ ມີສິດທວງເອົາຄ່າເສຍຫາຍ.

ຜູ້ໃຫ້ເຊົ່າຊື້ ມີພັນທະ ດັ່ງນີ້:

1. ມອບຊັບສິ່ງຂອງໃຫ້ຜູ້ເຊົ່າຊື້ ຕາມການຕົກລົງ;
2. ໂອນກຳມະສິດຂອງຊັບສິ່ງຂອງນັ້ນ ໃຫ້ຜູ້ເຊົ່າຊື້ ເມື່ອຜູ້ກ່ຽວໄດ້ຈ່າຍເງິນຄົບຖ້ວນແລ້ວ;

3. ຮັບຜິດຊອບຕໍ່ຄຸນນະພາບຂອງຊັບສິ່ງຂອງ ທີ່ໃຫ້ເຊົ່າຊື້ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 407 ຂອງປະມວນກົດໝາຍສະບັບນີ້.

ຈຸດປະສົງ	ເພື່ອກຳນົດກ່ຽວກັບ ສິ່ງທີ່ຄວນກະທຳ ຫຼື ບໍ່ກະທຳສິ່ງໃດໜຶ່ງຂອງຜູ້ໃຫ້ເຊົ່າຊື້ ຕໍ່ຜູ້ເຊົ່າຊື້.
ຕົວຢ່າງ	**ເບິ່ງ ຕົວຢ່າງ ຂອງມາດຕາ 414.** **ກ** ໄດ້ເຮັດສັນຍາເຊົ່າຊື້ລົດກະບະກັບ **ຂ** ໃນລາຄາ 300.000.000 ກີບ ໂດຍ ຂ ຈ່າຍກ່ອນ 10%, ສ່ວນເຫຼືອ 90% ນັ້ນ **ຂ** ຈະຈ່າຍເປັນງວດ, ງວດລະ 5.000.000 ກີບ, ຖ້າ **ຂ** ຫາກຈ່າຍຊ້າກວ່າກຳນົດເວ ລາ **ກ** ມີສິດທວງເອົາຄ່າເຊົ່າຊື້ນຳ **ຂ**. ໃນກໍລະນີ **ຂ** ຄ້າງຈ່າຍ ສາມງວດລຽນຕິດ ແລະ **ກ** ໄດ້ສົ່ງໜັງສືທວງແຕ່ **ຂ** ກໍບໍ່ປະຕິບັດຕາມ ຫຼັງຈາກກຳນົດເວລາ ສາມສິບວັນ ນັບແຕ່ວັນໄດ້ຮັບໜັງສືທວງເປັນຕົ້ນໄປ, **ກ** ຈະຍົກເລີກສັນຍາເຊົ່າຊື້ ແລະ ທວງເອົາລົດກະບະຄັນດັ່ງກ່າວຄືນ. ສ່ວນເງິນທີ່ **ຂ** ໄດ້ຈ່າຍຜ່ານມາແລ້ວນັ້ນຈະບໍ່ໄດ້ສົ່ງຄືນໃຫ້ **ຂ**, ຖ້າວ່າ ລົດຄັນດັ່ງກ່າວຫາກມີການເປ່ເພເສຍຫາຍ **ກ** ມີສິດທວງເອົາຄ່າເສຍຫາຍ. ໃນກໍລະນີ **ຂ** ຫາກໄດ້ປະຕິບັດສັນຍາຢ່າງຖືກຕ້ອງແລະຄົບຖ້ວນແລ້ວ, **ກ** ມີພັນທະໂອນກຳມະສິດ ລົດຄັນດັ່ງກ່າວໃຫ້ **ຂ**.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງຂຶ້ນໃໝ່ ໂດຍຜັນຂະຫຍາຍມາຈາກ ມາດຕາ 41 ການຂາຍສິນຄ້າ ເປັນເງິນຜ່ອນ ຂອງກົດໝາຍວ່າດ້ວຍຂໍ້ຜູກພັນ ແລະ ນອກສັນຍາ ປີ 2008 ແລະ ອີງໃສ່ສະພາບການຂະຫຍາຍຕົວຂອງເສດຖະກິດ-ສັງຄົມ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 408, 414, 416, 417 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 416 ສິດ ແລະ ພັນທະຂອງຜູ້ເຊົ່າຊື້

ຜູ້ເຊົ່າຊື້ ມີສິດ ດັ່ງນີ້:

1. ທວງເອົາຊັບສິ່ງຂອງ ຕາມການຕົກລົງຈາກ ຜູ້ໃຫ້ເຊົ່າຊື້;
2. ໄດ້ຮັບໝາກຜົນໃດໜຶ່ງທີ່ເກີດຈາກຊັບສິ່ງຂອງທີ່ໄດ້ເຊົ່າຊື້ ນັບແຕ່ເວລາໄດ້ຄອບຄອງ ເປັນຕົ້ນໄປ;
3. ໄດ້ຮັບຊັບສິ່ງຂອງທີ່ເຊົ່າຊື້ ເປັນກຳມະສິດ ເມື່ອໄດ້ຊຳລະຄ່າຊັບສິ່ງຂອງນັ້ນຄົບຖ້ວນແລ້ວ;
4. ທວງໃຫ້ ຜູ້ໃຫ້ເຊົ່າຊື້ ຮັບຜິດຊອບຕໍ່ຄຸນນະພາບຂອງຊັບສິ່ງຂອງ ຕາມທີ່ໄດ້ກຳນົດໄວ້ໃນ ມາດ ຕາ 407 ຂອງປະມວນກົດໝາຍສະບັບນີ້;
5. ຍົກເລີກສັນຍາໃນເວລາໃດກໍໄດ້ ຕາມການເຫັນດີຂອງຜູ້ໃຫ້ເຊົ່າຊື້ ແຕ່ຕ້ອງໄດ້ສົ່ງຊັບສິ່ງຂອງນັ້ນຄືນ ໃນສະພາບທີ່ໃຊ້ການໄດ້ ແລະ ຮັບຜິດຊອບຕໍ່ການເປ່ເພ ເສຍຫາຍ ທີ່ເກີດຂຶ້ນກັບຊັບສິ່ງຂອງນັ້ນ.

ຜູ້ເຊົ່າຊື້ ມີພັນທະ ດັ່ງນີ້:

1. ຈ່າຍຄ່າຊັບສິ່ງຂອງເປັນງວດຕາມການຕົກລົງ;
2. ນຳໃຊ້ ແລະ ປົກປັກຮັກສາຊັບສິ່ງຂອງ ໃຫ້ຢູ່ໃນສະພາບປົກກະຕິ;
3. ມອບຊັບສິ່ງຂອງຄືນແກ່ຜູ້ໃຫ້ເຊົ່າຊື້ ໃນກໍລະນີຄ້າງຈ່າຍເງິນສາມງວດລຽນຕິດ;
4. ບໍ່ມີສິດ ຂາຍ, ໂອນ, ແລກປ່ຽນ ຫຼື ຊື້ຂາດດ້ວຍຮູບການອື່ນ ຊັບສິ່ງຂອງສ່ວນໃດສ່ວນໜຶ່ງ ຫຼື ທັງໝົດ, ເວັ້ນເສຍແຕ່ ຫາກໄດ້ມີການຕົກລົງກັນໄວ້ເປັນຢ່າງອື່ນ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ກ່ຽວກັບ ສິ່ງທີ່ຄວນກະທຳ ຫຼື ບໍ່ກະທຳສິ່ງໃດໜຶ່ງຂອງ ຜູ້ເຊົ່າຊື້ ຕໍ່ ຜູ້ໃຫ້ເຊົ່າຊື້
ຕົວຢ່າງ	**ເບິ່ງ ຕົວຢ່າງ ໃນມາດຕາ 414.** ເມື່ອ **ຂ** ໄດ້ຈ່າຍຄ່າເຊົ່າຊື້ຄົບຖ້ວນຕາມການຕົກລົງແລ້ວ **ຂ** ກໍມີສິດທວງໃຫ້ **ກ** ໂອນກຳມະສິດໃນລົດໃຫ້ **ຂ**. **ຂ** ມີສິດໄດ້ຮັບຜົນປະໂຫຍດຈາກການນຳໃຊ້ລົດນັບແຕ່ວັນໄດ້ຄອບຄອງເປັນຕົ້ນມາ. ຖ້າວ່າລົດຫາກມີຈຸດບົກພ່ອງ **ຂ** ມີສິດທວງໃຫ້ **ກ** ສ້ອມແປງ. **ຂ** ມີສິດຍົກເລີກສັນຍາເຊົ່າຊື້ຕາມການເຫັນດີຂອງ **ກ**; **ຂ** ຕ້ອງໄດ້ສົ່ງລົດທີ່ເຊົ່າຊື້ນັ້ນຄືນໃຫ້ **ກ** ໃນສະພາບປົກກະຕິ ພ້ອມທັງຮັບຜິດຊອບໃຊ້ແທນຄ່າເສຍຫາຍໃຫ້ **ກ** ໃນກໍລະນີທີ່ລົດຫາກມີການເປ່ເພຍ້ອນການນຳໃຊ້ທີ່ບໍ່ຖືກຕ້ອງສອດຄ່ອງຂອງ **ຂ**. **ຂ** ມີພັນທະຈ່າຍຄ່າເຊົ່າຊື້ລົດຕາມທີ່ໄດ້ຕົກລົງກັນ, ສາມາດນຳໃຊ້ ແລະ ມີພັນທະປົກປັກຮັກສາໃຫ້ລົດໃຫ້ຢູ່ໃນສະພາບປົກກະຕິ ແລະ ມອບລົດຄືນໃຫ້ **ກ** ໃນກໍລະນີຄ້າງຈ່າຍຄ່າເຊົ່າຊື້ສາມງວດລຽນຕິດ. ນອກຈາກນີ້, **ຂ** ບໍ່ມີສິດຂາຍ, ໂອນ, ແລກປ່ຽນ ຫຼື ຊື້ຂາດລົດຄັນດັ່ງກ່າວ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງຂຶ້ນໃໝ່ ໂດຍຜັນຂະຫຍາຍມາຈາກ ມາດຕາ 41 ການຂາຍສິນຄ້າເປັນເງິນຜ່ອນ ຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນ ແລະ ນອກສັນຍາ ປີ 2008 ແລະ ອີງໃສ່ສະພາບການຂະຫຍາຍຕົວຂອງເສດຖະກິດ-ສັງຄົມ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 537 ຂອງປະມວນກົດໝາຍແພ່ງ ແລະ ພານິດໄທ, ແມ່ນກຳນົດວ່າ ຖ້າຜູ້ເຊົ່າ ຮັບຜິດຊອບຕໍ່ຄ່າໃຊ້ຈ່າຍ ກໍສາມາດຍົກເລີກສັນຍາໄດ້ຢ່າງອິດສະລະ. ສ່ວນມາດ ຕາ 416 ວັກ 1 ຂໍ້ 5 ຂອງປະມວນກົດໝາຍແພ່ງລາວ ແມ່ນກຳນົດວ່າ: [ຍົກເລີກສັນຍາໃນເວລາໃດກໍໄດ້ ຕາມການເຫັນດີຂອງຜູ້ໃຫ້ເຊົ່າຊື້].
ມາດຕາອ້າງອີງ	ມາດຕາ 408, 414, 415 ແລະ 417 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 417 ການຊື້ຂາດຊັບສິ່ງຂອງ

ໃນກໍລະນີຜູ້ເຊົ່າຊື້ ຫາກໄດ້ຂາຍ, ໂອນ, ແລກປ່ຽນ ຫຼື ຊື້ຂາດ ດ້ວຍຮູບການອື່ນ ຊັບສິ່ງຂອງສ່ວນໃດໜຶ່ງ ຫຼື ທັງໝົດ ໃນໄລຍະທີ່ກຳນົດເວລາຕາມສັນຍາເຊົ່າຊື້ ຍັງບໍ່ທັນສິ້ນສຸດ ຜູ້ກ່ຽວຈະມີຄວາມຮັບຜິດຊອບທາງອາຍາ. ຜູ້ໃຫ້ເຊົ່າຊື້ ຫຼື ຜູ້ທີ່ໄດ້ຮັບຄວາມເສຍຫາຍ ມີສິດຮ້ອງຟ້ອງຕາມກົດໝາຍ, ເວັ້ນເສຍແຕ່ຫາກໄດ້ມີການຕົກລົງກັນໄວ້ເປັນຢ່າງອື່ນ.

ຈຸດປະສົງ	ເພື່ອກຳນົດກ່ຽວກັບຄວາມຮັບຜິດຊອບຂອງຜູ້ເຊົ່າຊື້ຕໍ່ກັບຊັບສິ່ງຂອງທີ່ຕົນຍັງບໍ່ແມ່ນເຈົ້າກຳມະສິດ ແລະ ການປົກປ້ອງສິດ ແລະ ຜົນປະ�โຫຍດຂອງຜູ້ໃຫ້ເຊົ່າຊື້.
ຕົວຢ່າງ	**1. ຄ** (ຜູ້ເຊົ່າຊື້) ໄດ້ນຳໃຊ້ລົດກະບະແລ້ວຕ້ອງປົກປັກຮັກສາ ແລະ ນຳໃຊ້ລົດຄັນດັ່ງກ່າວນັ້ນຕ້ອງໃຫ້ຢູ່ໃນສະພາບປົກກະຕິດີ ແລະ ຜູ້ກ່ຽວບໍ່ມີສິດຈະເອົາລົດນັ້ນໄປຂາຍຕໍ່ໃນໄລຍະປະຕິບັດສັນຍາ. ຖ້າ **ຄ** ຫາກບໍ່ປະຕິບັດແລ້ວຜູ້ກ່ຽວຈະມີຄວາມຜິດທາງອາຍາ. **2.** ອີງໃສ່ ຕົວຢ່າງ 2 ຂອງມາດຕາ 414. ໃນຊ່ວງໄລຍະນີ້ **ກ** ບໍ່ມີສິດຊື້ຂາດທີ່ຈະເອົາທີ່ດິນຕອນນີ້ຂາຍ ຫຼື ແລກປ່ຽນ ບາງສ່ວນ ຫຼື ທັງໝົດກັບບຸກຄົນອື່ນໄດ້. ເນື່ອງຈາກວ່າ **ກ** ຍັງບໍ່ທັນເປັນເຈົ້າກຳມະສິດຕໍ່ກັບທີ່ດິນຕອນນີ້ເທື່ອ. ຖ້າຫາກ **ກ** ມີການກະທຳທີ່ໄດ້ເວົ້າມານີ້. **ຂ** ມີສິດຮ້ອງຟ້ອງເອົາຄ່າເສຍຫາຍຈາກ **ກ** ແລະ **ກ** ກໍມີຄວາມຮັບຜິດຊອບທາງອາຍານຳອີກ.

ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງຂຶ້ນໃໝ່ ໂດຍຜັນຂະຫຍາຍມາຈາກ ມາດຕາ 41 ການຂາຍສິນຄ້າເປັນເງິນຜ່ອນ ຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນ ແລະ ນອກສັນຍາ ປີ 2008, ເພື່ອກຳນົດໃຫ້ເນື້ອໃນມີຄວາມກະຈ່າງແຈ້ງ ແລະ ສອດຄ່ອງກັບການກະທຳຕົວຈິງຂອງສັງຄົມ ສາມາດດັດປັບຜູ້ທີ່ລະເມີດສັນຍາເຊົ່າຊື້.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 408, 414-416 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ງ. ສັນຍາມອບຊັບ

ມາດຕາ 418 ສັນຍາມອບຊັບ

ສັນຍາມອບຊັບ ແມ່ນ ການຕົກລົງຂອງເຈົ້າຂອງຊັບ, ຊຶ່ງເອົາຊັບທີ່ເປັນກຳມະສິດຂອງຕົນ ໃຫ້ຜູ້ໃດ ໜຶ່ງ ດ້ວຍຄວາມສະໝັກໃຈ ໂດຍບໍ່ຮຽກຮ້ອງສິ່ງຕອບແທນ ແລະ ຜູ້ຮັບກໍເຫັນດີຮັບເອົາຊັບນັ້ນ.

ເປົ້າໝາຍຂອງສັນຍາມອບຊັບ ອາດແມ່ນ ສັງຫາລິມະຊັບ, ອະສັງຫາລິມະຊັບ ຫຼື ສິດທວງ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ກ່ຽວກັບ ເງື່ອນໄຂໃນການມອບຊັບທີ່ເປັນກຳມະສິດຂອງຕົນ ໃຫ້ແກ່ບຸກຄົນອື່ນໂດຍບໍ່ມີການຕອບແທນ.
ຕົວຢ່າງ	**1. ກ** ຕົກລົງມອບລົດເກັ່ງ ຈຳນວນໜຶ່ງຄັນທີ່ເປັນກຳມະສິດຂອງຕົນເພື່ອເປັນຂອງຂັວນ ໃຫ້ **ຂ** ຜູ້ເປັນນ້ອງຊາຍຫາກຽນຈົບມະຫາວິທະຍາໄລດ້ວຍຄວາມສະໝັກໃຈໂດຍບໍ່ຄິດໄລ່ສິ່ງໃດໆຕອບແທນ, ແລະ **ຂ** ກໍເຫັນດີຮັບເອົາ. ກໍລະນີນີ້ ສັນຍາ ມີຜົນສັກສິດ ເນື່ອງຈາກຄູ່ສັນຍາໄດ້ມີການຕົກລົງກັນແລ້ວ ແລະ **ກ** ກໍມີພັນທະມອບຊັບນັ້ນໃຫ້ **ກ**. **2. ກ** ມີຄວາມພໍໃຈມອບທີ່ດິນ 20 ເຮັກຕາໃຫ້ **ຂ** ເປັນເຈົ້າກຳມະສິດໃນຕອນດິນດັ່ງກ່າວ. ໂດຍທີ່ **ກ** ບໍ່ໄດ້ຫວັງສິ່ງຕອບແທນຈາກ **ຂ**. ແລະ **ຂ** ເອງ ກໍເຫັນດີຮັບເອົາ. ກໍລະນີນີ້ ສັນຍາດັ່ງກ່າວຕ້ອງໄດ້ເຮັດເປັນລາຍລັກອັກສອນ ຕາມມາດຕາ 421 ຂອງປະມວນກົດໝາຍແພ່ງ. **3. ກ** ໄດ້ເອົາເງິນຈຳນວນ 50.000.000 ກີບ ໃຫ້ **ຂ** ຢືມ ພາຍໃນກຳນົດເວລາ ໜຶ່ງປີ. ກ່ອນກຳນົດເວລາຂອງສັນຍາກູ້ຢືມໃກ້ຈະສິ້ນສຸດ **ກ** ໄດ້ມອບສິດທວງໃຫ້ **ຄ** ເປັນຜູ້ໄປທວງເງິນ 50,000,000 ກີບ ນຳ **ຂ**. ກໍລະນີນີ້ ສັນຍາດັ່ງກ່າວຕ້ອງໄດ້ເຮັດເປັນລາຍລັກອັກສອນ ຕາມມາດຕາ 422 ຂອງປະມວນກົດໝາຍແພ່ງ.
ເຫດຜົນໃນການຮັກສາເນື້ອໃນເດີມ	ມາດຕານີ້ຮັກສາເນື້ອໃນຂອງ ມາດຕາ 47 (ໃໝ່) ສັນຍາມອບຊັບ ຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ປີ 2008, ມີແຕ່ເພີ່ມຄຳວ່າ "**ຫຼື ສິດທວງ**". ການເພີ່ມເຕີມຄຳວ່າ ສິດທວງ ນີ້ກໍເພື່ອເຮັດໃຫ້ເນື້ອໃນຂອງສັນຍາມອບຊັບໄດ້ກວ້າງ ຂວາງຂຶ້ນຕື່ມ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 457 ສັນຍາມອບຊັບ ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2015; ມາດຕາ 549, 550 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 403, 420,421, 422, ຂອງປະມວນກົດໝາຍແພ່ງ.

ຂໍ້ມູນອື່ນ ຫຼື ປະເພນີສານ	ຕາມປະມວນກົດໝາຍແພ່ງຍີ່ປຸ່ນ ມາດຕາ 550 ໃນກໍລະນີທີ່ສັນຍາມອບຊັບ ເປັນສັນຍາປາກເປົ່າ, ກ່ອນການມອບຊັບ ຜູ້ມອບຊັບ ສາມາດຍົກເລີກສັນຍາ ເວລາໃດກໍໄດ້ ເພາະວ່າເປັນສັນຍາຝ່າຍດຽວ, ຍົກເວັ້ນສັນຍາເປັນລາຍລັກ ອັກສອນ ຊຶ່ງຕ້ອງໄດ້ມີການຕົກລົງຊຶ່ງກັນ ແລະ ກັນ.

ມາດຕາ 419 ຂອບເຂດການມອບຊັບ

ຂອບເຂດຂອງການມອບຊັບ ໃຫ້ປະຕິບັດດັ່ງດຽວກັນກັບຂອບເຂດສິດໃນການເຮັດພິໄນກຳ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 592 ຂອງປະມວນກົດໝາຍສະບັບນີ້.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ກ່ຽວກັບ ຂອບເຂດຂອງຊັບສິນຂອງຕົນທີ່ສາມາດມອບຊັບໄດ້.
ຕົວຢ່າງ	**1.** ອີງໃສ່ຕົວຢ່າງ 2 ຂອງມາດຕາ 418 ຖ້າວ່າ **ກ** ມີລູກ ໜຶ່ງຄົນ **ກ** ສາມາດ ມອບດິນໃຫ້ **ຂ** ພຽງແຕ່ ຫຼື ເທົ່າກັບ 10 ເຮັກຕາເທົ່ານັ້ນ. **2.** ອີງໃສ່ຕົວຢ່າງ 3 ຂອງມາດຕາ 418 ຖ້າວ່າ **ກ** ມີລູກ ສາມຄົນ ແມ່ນ **ກ** ສາມາດມອບເງິນໃຫ້ແກ່ **ຄ** ພຽງ **¼** ຫຼື ເທົ່າກັບ 12.500.000 ກີບ ເທົ່ານັ້ນ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກມາດຕາ 51 (ໃໝ່) ຂອບເຂດການມອບຊັບ ແລະ ການຍົກຊັບ ຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ປີ 2008. ຊຶ່ງໄດ້ມີການແຍກມາດຕາ 51 ຂອບເຂດການມອບຊັບ ແລະ ການຍົກ ຊັບ ຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ. ເພື່ອເຮັດໃຫ້ ມີການກຳນົດທີ່ຊັດເຈນ ຫຼີກລ້ຽງຄວາມສັບສົນໃນພາກປະຕິບັດຕົວຈິງ.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 592 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 420 ການມອບສັງຫາລິມະຊັບ

ການມອບສັງຫາລິມະຊັບ ແມ່ນ ການມອບຊັບເຄື່ອນທີ່ ຊຶ່ງຜູ້ຮັບຈະກາຍເປັນເຈົ້າກຳມະສິດ ນັບ ແຕ່ເວລາຮັບ ເປັນຕົ້ນໄປ.

ສຳລັບການມອບສັງຫາລິມະຊັບທີ່ເຮັດເປັນລາຍລັກອັກສອນ ຊຶ່ງຕ້ອງຈົດທະບຽນນັ້ນ ຈະມີຜົນ ສັກ ສິດນັບແຕ່ເວລາໄດ້ຈົດທະບຽນ ເປັນຕົ້ນໄປ.

ຈຸດປະສົງ	ເພື່ອກຳນົດກ່ຽວກັບ ວິທີການມອບສັງຫາລິມະຊັບ ພ້ອມທັງໃຫ້ຮູ້ວ່າ ກຳມະສິດ ຈະປ່ຽນນັບແຕ່ເວລາໃດ.
ຕົວຢ່າງ	**1.** **ກ** ໄດ້ມອບໂທລະສັບໜຶ່ງໜ່ວຍໃຫ້ **ຂ** ແລະ **ຂ** ເປັນເຈົ້າກຳມະສິດນັບ ແຕ່ເວລາທີ່ຜູ້ກ່ຽວຮັບເອົາໂທລະສັບນັ້ນ, ສ່ວນການມອບຊັບເຄື່ອນທີ່ໃດ ທີ່ເຮັດເປັນລາຍລັກອັກສອນທີ່ຕ້ອງຈົດທະບຽນນັ້ນ ຜູ້ຮັບຊັບຈະເປັນເຈົ້າ ກຳມະສິດນັບແຕ່ຈົດທະ ບຽນເປັນຕົ້ນໄປ; **2.** **ກ** ໄດ້ເອົາຄວາຍ ໜຶ່ງໂຕ ໃຫ້ **ຂ**. ຖືວ່າ **ຂ** ຈະເປັນເຈົ້າກຳມະສິດຕໍ່ຄວາຍ ໂຕນີ້ ນັບແຕ່ເວລາທີ່ **ກ** ໄດ້ມອບຄວາຍໃຫ້ **ຂ** ຈູງໄປເຮືອນ ຫຼື ບ່ອນ ລ້ຽງສັດຂອງ **ຂ**.

	3. ກ ໄດ້ມອບລິດຈັກ ໜຶ່ງຄັນໃຫ້ **ຂ.** ໂດຍທີ່ **ກ** ໄດ້ໂອນຊື່ຈາກ **ກ** ມາ ເປັນ ຊື່ **ຂ,** ສະນັ້ນ. **ຂ** ເປັນເຈົ້າກຳມະສິດລິດຈັກນັບແຕ່ເວລາທີ່ທະບຽນລິດຈັກ ຄັນດັ່ງກ່າວ ອອກເປັນຊື່ **ຂ.**
ເຫດຜົນໃນການຮັກສາເນື້ອ ໃນເດີມ	ມາດຕານີ້ຍັງຮັກສາເດີມເນື້ອໃນ ມາດຕາ 48 ການມອບສັງຫາລິມະຊັບ ຂອງ ກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ປີ 2008.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງຂອງປະເທດອື່ນ	ມາດຕາ 458 ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2015.
ມາດຕາອ້າງອີງ	ມາດຕາ 292 ແລະ 369 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 421 ການມອບອະສັງຫາລິມະຊັບ

ການມອບອະສັງຫາລິມະຊັບ ແມ່ນ ການມອບຊັບຄົງທີ່ຂອງຜູ້ມອບ ຊຶ່ງມີເອກະສານຢັ້ງຢືນ ກຳມະ ສິດ ຫຼື ສິດນຳໃຊ້ຢ່າງຖືກຕ້ອງຕາມກົດໝາຍ.-

ການມອບອະສັງຫາລິມະຊັບ ຕ້ອງເຮັດເປັນລາຍລັກອັກສອນ.

ຜູ້ຮັບອະສັງຫາລິມະຊັບ ຈະກາຍເປັນເຈົ້າກຳມະສິດ ນັບແຕ່ເວລາໄດ້ຈົດທະບຽນເປັນຕົ້ນໄປ.

ຈຸດປະສົງ	ເພື່ອກຳນົດກ່ຽວກັບ ວິທີການມອບອະສັງຫາລິມະຊັບ ພ້ອມທັງໃຫ້ຮູ້ວ່າ ກຳມະສິດຈະປ່ຽນນັບແຕ່ເວລາໃດ.
ຕົວຢ່າງ	**1. ກ** ຕົກລົງມອບທີ່ດິນໜຶ່ງຕອນມີເນື້ອທີ່ 750 ຕາແມັດອອກຊື່ **ກ** ໃຫ້ **ຂ** ແລະ **ຂ** ຈະເປັນເຈົ້າກຳມະສິດນັບແຕ່ **ຂ** ໄປຈົດທະບຽນນຳອົງການທີ່ ກ່ຽວຂ້ອງຢ່າງຖືກຕ້ອງສຳເລັດ. **2.** ອີງໃສ່ຕົວຢ່າງ 2 ຂອງມາດຕາ 418 ຂອງບົດອະທິບາຍ ປະມວນກົດໝາຍ ແພ່ງ. **ຂ** ຈະເປັນເຈົ້າກຳມະສິດໃນທີ່ດິນ 10 ເຮັກຕານີ້ກໍຕໍ່ເມື່ອ **ກ** ໄດ້ໂອນ ສິດນຳໃຊ້ທີ່ດິນຕອນນີ້ອອກເປັນຊື່ **ຂ.**
ເຫດຜົນໃນການຮັກສາເນື້ອ ໃນເດີມ	ມາດຕານີ້ໄດ້ປັບປຸງມາຈາກ ມາດຕາ 49 ການມອບອະສັງຫາລິມະຊັບຂອງກົດ ໝາຍວ່າດ້ວຍຂໍ້ຜູກພັນໃນ ແລະ ນອກສັນຍາ ປີ 2008, ໂດຍໄດ້ມີການຕັດຄຳ ສັບ "**ຈາກອົງການທີ່ມີສິດກ່ຽວຂ້ອງ**" ໃນທ້າຍວັກທີ່ 1 ຂອງມາດຕາ 49.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງຂອງປະເທດອື່ນ	ມາດຕາ 459 ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2015.
ມາດຕາອ້າງອີງ	ມາດຕາ 292 ແລະ 369 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 422 ການມອບສິດທວງ

ການມອບສິດທວງ ແມ່ນ ການມອບສິດທີ່ໄດ້ມາຈາກສັນຍາ ຫຼື ກົດໝາຍ ຂອງຜູ້ມອບໃຫ້ຜູ້ຮັບສິດທວງ.

ການມອບສິດທວງ ຕ້ອງເຮັດເປັນລາຍລັກອັກສອນ ແລະ ຜູ້ມອບຕ້ອງໄດ້ແຈ້ງກ່ຽວກັບການມອບສິດທວງນັ້ນ ໃຫ້ແກ່ບຸກຄົນອື່ນ ທີ່ມີສິດ ແລະ ຜົນປະໂຫຍດ ກ່ຽວກັບສິດທວງນັ້ນ.

ຈຸດປະສົງ	ເພື່ອກຳນົດກ່ຽວກັບ ວິທີການມອບສິດທວງ.
ຕົວຢ່າງ	ອີງໃສ່ **ຕົວຢ່າງ** 3 ຂອງມາດຕາ 418 ຂອງບົດອະທິບາຍ ປະມວນກົດໝາຍແພ່ງ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ໄດ້ສ້າງຂຶ້ນໃໝ່ ເພື່ອກຳນົດເນື້ອໃນຄຳວ່າສິດທວງໃຫ້ມີຄວາມຊັດເຈນ ແລະ ສອດຄ່ອງກັບການກະທຳຕົວຈິງຢູ່ໃນສັງຄົມ ທັງເປັນການປົກປ້ອງສິດຂອງທັງສອງຝ່າຍ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 401 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 423 ພັນທະໃນການແຈ້ງຈຸດບົກພ່ອງຂອງຊັບ

ຜູ້ມອບຊັບ ຕ້ອງແຈ້ງຈຸດບົກພ່ອງ ຫຼື ຈຸດພິເສດຂອງຊັບທີ່ມອບ ໃຫ້ຜູ້ຮັບນັ້ນຊາບ. ໃນກໍລະນີທີ່ບໍ່ໄດ້ແຈ້ງ, ຜູ້ມອບຊັບ ຕ້ອງຮັບຜິດຊອບຕໍ່ຄວາມເສຍຫາຍ ທີ່ເກີດຂຶ້ນຈາກຈຸດບົກພ່ອງ ຫຼື ຈຸດພິເສດຂອງຊັບດັ່ງກ່າວ.

ຈຸດປະສົງ	ເພື່ອກຳນົດກ່ຽວກັບ ພັນທະໃນການແຈ້ງຂອງຜູ້ມອບຊັບ ກໍລະນີຊັບທີ່ເປັນເປົ້າ ໝາຍຂອງການມອບ ຫາກມີຈຸດບົກຜ່ອງ. ລວມທັງໃຫ້ຮູ້ເຖິງຄວາມຮັບຜິດຊອບ ກໍລະນີທີ່ບໍ່ປະຕິບັດພັນທະໃນການແຈ້ງ.
ຕົວຢ່າງ	**ກ** ໄດ້ມອບໂທລະທັດທີ່ວົງຈອນຂາດໃຫ້ **ຂ** ແລະ ໂທລະທັດດັ່ງກ່າວເປັນສາເຫດໃຫ້ເກີດໄຟໄໝ້. ໃນກໍລະນີນີ້, ຖ້າ **ກ** ຫາກຮູ້ແລ້ວວ່າວົງຈອນນັ້ນຂາດ ແຕ່ບໍ່ໄດ້ບອກເລື່ອງນັ້ນຕໍ່ **ຂ**. **ກ** ຕ້ອງຊົດໃຊ້ຄ່າເສຍຫາຍໃຫ້ **ຂ**.
ເຫດຜົນໃນການຮັກສາເນື້ອໃນເດີມ	ມາດຕານີ້ຍັງຮັກສາເນື້ອໃນເດີມສ່ວນໃດສ່ວນໜຶ່ງຂອງ ມາດຕາ 52 ພັນທະໃນການແຈ້ງຈຸດບົກພ່ອງຂອງຊັບ ຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນ ແລະ ນອກສັນຍາ ປີ 2008, ເພາະເນື້ອໃນຂອງມາດຕາ 52 ແມ່ນໄດ້ກຳນົດທັງ ຜູ້ມອບຊັບ ແລະ ຜູ້ຍົກຊັບ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 461 ການແຈ້ງກ່ຽວກັບຄວາມບົກຜ່ອງຂອງຊັບທີ່ມອບ ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2015; ມາດຕາ 551 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 407 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ຈ. ສັນຍາຍົກຊັບ

ມາດຕາ 424 ສັນຍາຍົກຊັບ

ສັນຍາຍົກຊັບ ແມ່ນ ການຕົກລົງຂອງເຈົ້າຂອງຊັບ ທີ່ເອົາຊັບຂອງຕົນໃຫ້ຜູ້ໃດໜຶ່ງ ຊຶ່ງຜູ້ຮັບຈະຕ້ອງປະຕິບັດພັນທະໃດໜຶ່ງ ຕາມການຕົກລົງກ່ອນ ຫຼື ຫຼັງການຮັບຊັບນັ້ນ.

ຜູ້ຮັບຊັບ ຈະກາຍເປັນເຈົ້າກຳມະສິດ ກໍຕໍ່ເມື່ອຫາກໄດ້ປະຕິບັດພັນທະດັ່ງກ່າວ ຢ່າງຄົບຖ້ວນແລ້ວ. ໃນກໍລະນີທີ່ປະຕິບັດບໍ່ຄົບຖ້ວນ ຫຼື ບໍ່ສາມາດປະຕິບັດໄດ້ ຜູ້ຍົກຊັບມີສິດຍົກເລີກສັນຍາດັ່ງກ່າວ.

ຈຸດປະສົງ	ເພື່ອກຳນົດກ່ຽວກັບ ເງື່ອນໄຂໃນການຍົກຊັບຂອງຕົນໃຫ້ແກ່ບຸກຄົນອື່ນໂດຍມີພັນທະໃນການຕອບແທນ.
ຕົວຢ່າງ	**1. ກ** ໄດ້ຕົກລົງຍົກຊັບຄື: ທີ່ດິນຈຳນວນໜຶ່ງຕອນມີເນື້ອທີ່ 800 ຕາແມັດໃຫ້ **ຂ**, ແຕ່ **ຂ** ຕ້ອງປະຕິບັດເງື່ອນໄຂດັ່ງນີ້: **ຂ** ຕ້ອງລ້ຽງດູເບິ່ງແຍງພໍ່ຂອງ **ກ** ຈົນຮອດວັນສຸດທ້າຍຂອງຊີວິດໃນເມື່ອ **ຂ** ໄດ້ປະຕິບັດເງື່ອນໄຂຄົບຖ້ວນຕາມທີ່ໄດ້ຕົກລົງກັນແລ້ວ **ຂ** ກໍເປັນເຈົ້າກຳມະສິດຕໍ່ທີ່ດິນຕອນດັ່ງກ່າວ. **2. ກ** ຕົກລົງຍົກຊັບ (ລົດຈັກ ໜຶ່ງຄັນ) ໃຫ້ **ຂ**, ແຕ່ **ຂ** ຕ້ອງດູແລ ແລະ ເຝົ້າຟາມງົວຂອງ **ກ** ໃຫ້ຄົບ ໜຶ່ງປີ. ລົດຈັກ ຄັນດັ່ງກ່າວຈະເປັນກຳມະສິດຂອງ **ຂ** ກໍຕໍ່ເມື່ອ **ຂ** ໄດ້ດູແລ ແລະ ເຝົ້າຟາມງົວຂອງ **ກ** ຈົນຄົບເວລາ ໜຶ່ງປີ. **3.** ອີງໃສ່ **ຕົວຢ່າງ** 2. **ຂ** ບໍ່ສາມາດດູແລ ແລະ ເຝົ້າຟາມງົວຂອງ **ກ** ໃຫ້ຄົບ ໜຶ່ງປີ. **ຂ** ປະຕິບັດພັນທະບໍ່ຄົບຖ້ວນ ແລ້ວ **ກ** ກໍມີສິດຍົກເລີກສັນຍາຍົກຊັບດັ່ງກ່າວ. **ຂ** ກໍບໍ່ມີສິດໄດ້ຮັບຊັບ (ລົດຈັກໜຶ່ງຄັນ) ຂອງ **ກ** ແລະ **ກ** ບໍ່ມີພັນທະຍົກຊັບໃຫ້ **ຂ**.
ເຫດຜົນໃນການຮັກສາເນື້ອໃນເດີມ	ມາດຕານີ້ໂດຍລວມແມ່ນຍັງຮັກສາເນື້ອໃນ ມາດຕາ 50 ສັນຍາຍົກຊັບ ຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນ ແລະ ນອກສັນຍາ ປີ 2008, ພຽງແຕ່ມີການຕັດບາງປະໂຫຍກ ໃນວັກທີໜຶ່ງເຊັ່ນ: "**ໂດຍມີເງື່ອນໄຂ ທີ່ຖືກຕ້ອງຕາມກົດໝາຍ**" ອອກ ແລະ ໄດ້ມີການປັບປ່ຽນຄຳສັບໃນວັກທີສອງໃນຄຳສັບ "**ເງື່ອນໄຂມາເປັນພັນທະ**" ເພື່ອໃຫ້ເນື້ອໃນມີຄວາມສອດຄ່ອງກວ່າເກົ່າ. ມາດຕານີ້ແມ່ນມີເນື້ອໃນຄ້າຍຄືກັບມາດຕາ 30 ຂອງປະມວນກົດໝາຍແພ່ງ ແຕ່ມີເງື່ອນໄຂແຕກຕ່າງກັນ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 553 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 425 ຂອບເຂດການຍົກຊັບ

ຂອບເຂດຂອງການຍົກຊັບ ໃຫ້ປະຕິບັດດັ່ງດຽວກັນກັບຂອບເຂດສິດໃນການເຮັດພິໄນກຳ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 592 ຂອງປະມວນກົດໝາຍສະບັບນີ້.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ກ່ຽວກັບ ຂອບເຂດຂອງຊັບສິນຂອງຕົນ ທີ່ສາມາດຍົກຊັບໄດ້.
ຕົວຢ່າງ	ອີງໃສ່ **ຕົວຢ່າງ** 1 ຂອງມາດຕາ 424. **ກ** ບໍ່ສາມາດຍົກຊັບໃຫ້ **ຂ** ເກີນກວ່າການກຳນົດໃນມາດຕາ 592 ຂອງປະມວນກົດໝາຍແພ່ງ.
ເຫດຜົນໃນການຮັກສາເນື້ອໃນເດີມ	ມາດຕານີ້ແມ່ນຍັງຮັກສາເນື້ອໃນເດີມ ມາດຕາ 51 (ໃໝ່) ຂອບເຂດຂອງການມອບຊັບ ແລະ ການຍົກຊັບ ຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນ ແລະ ນອກສັນຍາ ປີ 2008.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 592 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 426 ພັນທະໃນການແຈ້ງຈຸດບົກພ່ອງຂອງຊັບ

ຜູ້ຍົກຊັບ ຕ້ອງແຈ້ງຈຸດບົກພ່ອງ ຫຼື ຈຸດພິເສດຂອງຊັບທີ່ຍົກໃຫ້ຜູ້ຮັບນັ້ນຊາບ. ໃນກໍລະນີທີ່ບໍ່ໄດ້ແຈ້ງຜູ້ຍົກຊັບຕ້ອງຮັບຜິດຊອບຕໍ່ຄວາມເສຍຫາຍທີ່ເກີດຂຶ້ນຈາກຈຸດບົກພ່ອງ ຫຼື ຈຸດພິເສດຂອງຊັບດັ່ງກ່າວ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ຢ່າງກ່ຽວກັບ ຄວາມຮັບຜິດຊອບຂອງຜູ້ຍົກຊັບ ໃນກໍລະ ນີທີ່ຊັບສິ່ງຂອງທີ່ເປັນເປົ້າໝາຍການຍົກຊັບນັ້ນຫາກມີຈຸດບົກຜ່ອງ.
ຕົວຢ່າງ	ອີງໃສ່ **ຕົວຢ່າງ** 2 ຂອງ ມາດຕາ 424. ໃນເມື່ອ **ຂ** ໄດ້ປະຕິບັດພັນທະສຳເລັດຕາມການຕົກລົງແລ້ວ **ກ** ຍົກຊັບ (ລົດຈັກໜຶ່ງຄັນ) ໃຫ້ **ຂ. ກ** ຕ້ອງແຈ້ງກ່ຽວກັບຈຸດພິເສດ ຫຼື ຈຸດບົກຜ່ອງຂອງລົດ (ຖ້າມີ) ໃຫ້ແກ່ **ຂ** ຊາບ. ຖ້າບໍ່ດັ່ງນັ້ນ, ໃນເມື່ອ **ຂ** ນຳໃຊ້ແລ້ວມີຄວາມເສຍເກີດຂຶ້ນອັນເນື່ອງມາຈາກຈຸດບົກຜ່ອງດັ່ງກ່າວນັ້ນ **ກ** ຕ້ອງຮັບຜິດຊອບ **ຂ.**
ເຫດຜົນໃນການຮັກສາເນື້ອໃນເດີມ	ຍັງຮັກສາເນື້ອໃນເດີມສ່ວນໃດສ່ວນໜຶ່ງຂອງມາດຕາ 52 ພັນທະໃນການແຈ້ງຈຸດບົກພ່ອງຂອງຊັບ ຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນ ແລະ ນອກສັນຍາ ປີ 2008, ເພາະເນື້ອໃນ 52 ແມ່ນໄດ້ກຳນົດທັງ ຜູ້ມອບຊັບ ແລະ ຜູ້ຍົກຊັບ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 462 ການມອບຊັບໂດຍມີເງື່ອນໄຂ (ການຍົກຊັບ) ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2015; ມາດຕາ 553 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ສ. ສັນຍາຂາຍຝາກ

ມາດຕາ 427 ສັນຍາຂາຍຝາກ

ສັນຍາຂາຍຝາກ ແມ່ນ ການຕົກລົງຂອງຄູ່ສັນຍາເພື່ອຊື້ຂາຍຊັບ, ຊຶ່ງຜູ້ຂາຍຍັງມີສິດຊື້ຊັບທີ່ຂາຍນັ້ນຄືນໄດ້ ພາຍໃນເວລາ ສາມປີ ສຳລັບສັງຫາລິມະຊັບ ແລະ ຫ້າປີ ສຳລັບອະສັງຫາລິມະຊັບ ຕາມລາຄາທີ່ຕົນໄດ້ຂາຍໄປແລ້ວນັ້ນ.

ເມື່ອໝົດກຳນົດເວລາ ຕາມທີ່ໄດ້ກຳນົດໄວ້ໃນວັກທີໜຶ່ງ ຂອງມາດຕານີ້ແລ້ວ ຜູ້ຂາຍມີສິດຕໍ່ກຳນົດເວລາຂາຍຝາກອອກໄປອີກ ຖ້າຫາກໄດ້ມີການຕົກລົງກັນກ່ອນ ໃນເວລາເຮັດສັນຍາ ແຕ່ບໍ່ໃຫ້ເກີນ ໜຶ່ງປີ.

ເມື່ອຄວດກຳນົດເວລາແລ້ວ ຖ້າຜູ້ຂາຍ ຫາກບໍ່ຊື້ເອົາຊັບນັ້ນຄືນ, ຜູ້ຊື້ ກໍຈະເປັນເຈົ້າກຳມະສິດກ່ຽວກັບຊັບນັ້ນ ໂດຍເດັດຂາດ.

ອະສັງຫາລິມະຊັບທີ່ເປັນເປົ້າໝາຍຂອງສັນຍາຂາຍຝາກ ຕ້ອງນຳໄປຈົດທະບຽນການເຄື່ອນໄຫວສິດນຳໃຊ້ທີ່ດິນ. ສ່ວນສັງຫາລິມະຊັບຂອງສັນຍາຂາຍຝາກ ຕ້ອງຈົດທະບຽນຕາມລະບຽບການຈົດທະບຽນການຄ້ຳປະກັນ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ກ່ຽວກັບ ຈຸດພິເສດຂອງສັນຍາຂາຍຝາກ ແລະ ສາຍພົວພັນທາງກົດໝາຍຂອງສັນຍາດັ່ງກ່າວ.
ຕົວຢ່າງ	**1. ກ** ໄດ້ຕົກລົງຂາຍຝາກສິດ ນຳໃຊ້ທີ່ດິນພ້ອມເຮືອນຂອງຕົນໃຫ້ **ຂ** ໃນລາຄາ 100.000 ໂດລາສະຫະລັດ ກຳນົດຫ້າປີ (ເລີ່ມແຕ່ວັນທີ 1 ມັງກອນ 2016 ຫາ 1 ມັງກອນ 2021), **ກ** ມີສິດຊື້ເອົານຳໃຊ້ທີ່ດິນ-ເຮືອນຄືນໄດ້ ໃນລາຄາເດີມ ແລະ ພາຍໃນກຳນົດເວລາ ຫ້າປີ. ຖ້າກາຍກຳນົດເວລາທີ່ໄດ້ກຳນົດໄວ້ໃນສັນຍາແລ້ວ **ກ** ບໍ່ຊື້ເອົາຊັບນັ້ນຄືນ ຊັບດັ່ງກ່າວ ຈະກາຍເປັນກຳມະສິດ **ຂ** ໂດຍເດັດຂາດ. ໃນກໍລະນີດັ່ງກ່າວຫາກໄດ້ກຳນົດຂອງການຕໍ່ເວລາໄວ້ນັ້ນ ສັນຍາດັ່ງກ່າວກໍສາມາດຕໍ່ໄດ້ ແຕ່ບໍ່ໃຫ້ເກີນໜຶ່ງປີ ເຊັ່ນ **ກ** ແລະ **ຂ** ໄດ້ຕົກລົງຕໍ່ກຳນົດເວລາ 6 ເດືອນ ຖ້າກາຍກຳນົດເວລາດັ່ງກ່າວ **ກ** ບໍ່ຊື້ເອົາຊັບນັ້ນຄືນ **ຂ** ຈະເປັນເຈົ້າກຳມະສິດກ່ຽວກັບຊັບນັ້ນໂດຍເດັດຂາດ. ໃນກໍລະນີດັ່ງກ່າວ **ກ** ແລະ **ຂ** ຕ້ອງໄດ້ເອົາສັນຍາຂາຍຝາກ ສິດນຳໃຊ້ທີ່ດິນພ້ອມເຮືອນ ໄປຈົດທະບຽນນຳ ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ບ່ອນທີ່ຊັບນັ້ນຕັ້ງຢູ່ຕາມກຳນົດເວລາຂອງສັນຍາຂາຍຝາກນັ້ນ. **2. ກ** ເຮັດສັນຍາຂາຍຝາກລົດໃຫຍ່ກັບ **ຂ** ໃນລາຄາ 80.000.000 ກີບ ພາຍໃນກຳນົດເວລາ ສາມປີ (ເລີ່ມແຕ່ວັນທີ 1 ມັງກອນ 2018 ຫາ 1 ມັງກອນ 2021), **ກ** ສາມາດຊື້ເອົາລົດຄືນ ນຳ **ຂ** ໄດ້ເວລາໃດກໍ່ໄດ້ ພາຍໃນກຳນົດເວລາສາມປີ, ຖ້າວ່າ **ກ** ຫາກຍັງບໍ່ທັນມີເງື່ອນໄຂ ຊື້ເອົາລົດຄືນພາຍໃນກຳນົດເວລາດັ່ງກ່າວ ແລະ ໄດ້ມີການຕົກລົງກັນກ່ອນໃນເວລາເຮັດສັນຍາ **ກ** ກໍມີສິດຕໍ່ສັນຍາໄດ້ອີກ ແຕ່ບໍ່ໃຫ້ເກີນ ໜຶ່ງປີ (ແຕ່ວັນທີ 1 ມັງກອນ 2021 ຫາ 1 ມັງກອນ 2022), ຖ້າ **ກ** ບໍ່ມາຊື້ເອົາຄືນ ພາຍໃນເວລາທີ່ຕໍ່ນັ້ນ **ຂ** ກໍຈະໄດ້ກຳມະສິດລົດນັ້ນເລີຍ. ໃນກໍລະນີ ດັ່ງກ່າວ **ກ** ແລະ **ຂ** ຕ້ອງໄດ້ເອົາສັນຍາຂາຍຝາກລົດໃຫຍ່ ໄປຈົດທະບຽນຄ້ຳປະກັນນຳ ຂະແໜງການເງິນ.

	3. ກ (ຜູ້ຂາຍ) ເຮັດສັນຍາຂາຍຝາກລົດໃຫຍ່ກັບ **ຂ** (ຜູ້ຊື້) ໃນລາຄາ 80.000.000 ກີບ ພາຍໃນກຳນົດເວລາ ໜຶ່ງປີ (ເລີ່ມແຕ່ວັນທີ 1 ມັງກອນ 2021 ຫາ 1 ມັງກອນ 2022), ໃນກໍລະນີນີ້ ຖ້າການກຳນົດເວລາໜຶ່ງປີ **ຂ** ບໍ່ມີກຳມະສິດໃນລົດເທື່ອ ເນື່ອງຈາກວ່າ ກຳນົດເວລາ ຊຶ່ງ **ກ** ແລະ **ຂ** ຕົກລົງກັນນັ້ນ ບໍ່ສອດຄ່ອງກັບກົດໝາຍ ຈຶ່ງເປັນໂມຄະ, ສະນັ້ນ, **ກ** ຜູ້ຂາຍ ຍັງມີສິດຊື້ເອົາລົດຄືນ ພາຍໃນກຳນົດເວລາສາມປີ (1 ມັງກອນ 2021 ຫາ 1 ມັງກອນ 2024).
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 53 ສັນຍາຂາຍຝາກ ຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນ ແລະ ນອກສັນຍາ ປີ 2008, ໂດຍໄດ້ປັບປຸງກຳນົດເວລາຂອງການຂາຍຝາກ ທີ່ໃນເມື່ອກ່ອນກຳນົດຫຼັກການລວມດ້ານກຳນົດເວລາ ວ່າສັນຍາຂາຍຝາກ ມີກຳນົດເວລາຊື້ຄືນ 3 ປີ ທັງອະສັງຫາລິມະຊັບ ແລະ ອະສັງຫາລິມະຊັບ ຊຶ່ງມາແຍກອອກ ເປັນ 2 ປະເພດຄື: ອະສັງຫາລິມະຊັບກຳນົດເວລາໃນການຊື້ຄືນ 5 ປີ , ສັງຫາລິມະຊັບ ແມ່ນຮັກສາຫຼັກການເດີມຄື ກຳນົດເວລາໃນການຊື້ຄືນ ແມ່ນ 3 ປີ ແລະ ຕື້ມວັກທີ 4 ຂອງມາດຕານີ້ເພື່ອໃຫ້ມີການຈົດທະບຽນ ເນື່ອງຈາກວ່າການຂາຍຝາກ ມີລັກສະນະຄ້າຍຄືກັບການຄ້ຳປະກັນ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 579, 580 ແລະ 581 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ (ມີແຕ່ອະສັງຫາລິມະຊັບ); ມາດຕາ 454 ຂອງປະມວນກົດໝາຍແພ່ງຫວຽດນາມ; ມາດຕາ 560, 561, 562, 563 ແລະ 565 ຂອງປະມວນກົດໝາຍແພ່ງກຳປູເຈຍ.
ມາດຕາອ້າງອີງ	ມາດຕາ 364, 428, 429 ແລະ 562 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 428 ຜົນຂອງສັນຍາຂາຍຝາກ

ຖ້າຊັບທີ່ຂາຍຝາກນັ້ນ ຫາກມີຜົນໃດໜຶ່ງເກີດຂຶ້ນ, ຜູ້ຊື້ທີ່ໄດ້ຈ່າຍເງິນຄ່າຊັບໝົດແລ້ວ ກໍຈະເປັນເຈົ້າກຳມະສິດຕໍ່ຜົນທີ່ເກີດມານັ້ນ. ໃນກໍລະນີທີ່ຜູ້ຊື້ ຫາກຍັງບໍ່ທັນໄດ້ຈ່າຍເງິນຄ່າຊັບນັ້ນໝົດ, ຜູ້ຊື້ຈະບໍ່ມີສິດໄດ້ຮັບຜົນທີ່ເກີດມານັ້ນ, ເວັ້ນເສຍແຕ່ສັນຍາຫາກໄດ້ກຳນົດໄວ້ເປັນຢ່າງອື່ນ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ກ່ຽວກັບ ຜົນຂອງສັນຍາຂາຍຝາກ ພ້ອມທັງຜູ້ທີ່ຈະໄດ້ກຳມະສິດ ຕໍ່ໝາກຜົນທີ່ເກີດຂຶ້ນຈາກຊັບທີ່ຂາຍຝາກນັ້ນ.
ຕົວຢ່າງ	**1. ກ** ໄດ້ຕົກລົງຂາຍຝາກຄວາຍໜຶ່ງໂຕກັບ **ຂ** ລາຄາ 2.000.000 ກີບ ພາຍໃນກຳນົດເວລາ ສາມປີ, ກໍລະນີນີ້ **ຂ** ໄດ້ຈ່າຍເງິນຄົບຖ້ວນ (ໃນຈຳນວນ 2.000.000 ກີບ), ຕໍ່ມາ ຄວາຍໂຕດັ່ງກ່າວ ໄດ້ເກີດລູກ, ສະນັ້ນ **ຂ** ຈຶ່ງເປັນເຈົ້າກຳມະສິດ ຕໍ່ລູກຂອງຄວາຍທີ່ອອກມານັ້ນ. **2. ກ** ໄດ້ຕົກລົງຂາຍຝາກຄວາຍໜຶ່ງໂຕ ກັບ **ຂ** ລາຄາ 2.000.000 ກີບ ພາຍໃນກຳນົດເວລາສາມປີ, ກໍລະນີນີ້ **ຂ** ໄດ້ຈ່າຍເງິນໃຫ້ **ກ** ກ່ອນໃນຈຳນວນ 1.000.000 ກີບ (ບໍ່ທັນຄົບຖ້ວນຕາມການຕົກລົງ), ຕໍ່ມາ ຄວາຍໂຕດັ່ງກ່າວໄດ້ເກີດລູກ, ໃນເມື່ອ **ຂ** ຍັງຈ່າຍເງິນບໍ່ຄົບ **ຂ** ກໍຈະບໍ່ມີກຳມະສິດຕໍ່ລູກຂອງຄວາຍນັ້ນ ສະນັ້ນ ກຳມະສິດຂອງລູກຄວາຍທີ່ອອກມາ ເປັນຂອງ **ກ** ຜູ້ຂາຍ.

ເຫດຜົນໃນການຮັກສາເນື້ອໃນເດີມ	ມາດຕານີ້ປັບປຸງມາຈາກ ມາດຕາ 54 ຜົນຂອງສັນຍາຂາຍຝາກ ຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນ ແລະ ນອກສັນຍາ ປີ 2008, ໂດຍໄດ້ປັບປຸງ ຄຳສັບທີ່ວ່າ: "**ຊັບສິ່ງຂອງ**" ມາເປັນ "**ຊັບ**" ເພາະເປົ້າໝາຍຂອງສັນຍາຂາຍຝາກແມ່ນລວມເອົາທັງ ອະສັງຫາລິມະຊັບ ແລະ ສັງຫາລິມະຊັບ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 579 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 427, 429 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 429 ການປົກປັກຮັກສາຊັບທີ່ຂາຍຝາກ

ຜູ້ຊື້ຕ້ອງປົກປັກຮັກສາຊັບສິ່ງຂອງທີ່ຂາຍຝາກ ແລະ ຜູ້ຂາຍຕ້ອງຫົດແທນຄ່າໃຊ້ຈ່າຍຕ່າງໆ ໃນການປົກປັກຮັກສາຊັບນັ້ນ ຊຶ່ງຜູ້ຊື້ໄດ້ຈ່າຍໄປແລ້ວ. ໃນກໍລະນີທີ່ການໃຊ້ຈ່າຍດັ່ງກ່າວ ຫາກມີມູນຄ່າໜ້ອຍກໍຈະຕົກເປັນພາລະຂອງຜູ້ຊື້ເອງ, ຜູ້ຊື້ມີສິດນຳໃຊ້ຊັບທີ່ຂາຍຝາກນັ້ນ. ຖ້າຜູ້ຂາຍ ຫາກຊື້ເອົາຊັບຄືນພາຍໃນກຳນົດເວລາແລ້ວ, ຜູ້ຊື້ກໍຕ້ອງສົ່ງຊັບນັ້ນຄືນໃນສະພາບເດີມ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ກ່ຽວກັບ ການສິດ ແລະ ພັນທະຂອງຄູ່ສັນຍາ ໃນການຈັດຕັ້ງປະຕິບັດສັນຍາຂາຍຝາກ.
ຕົວຢ່າງ	**1. ກ** ຕົກລົງຂາຍຝາກມ້າໜຶ່ງ ໂຕ ກັບ **ຂ** (ເຮືອນໃກ້ຄຽງ) ພາຍໃນກຳນົດເວລາ ສອງປີ ລາຄາ 5.000.000 ກີບ, ຕໍ່ມາ **ຂ** ຜູ້ຊື້ ກໍໄດ້ມີການໄປດຳເນີນທຸລະກິດ ຢູ່ຕ່າງແຂວງຢູ່ເປັນປະຈຳ, ຈຶ່ງໄດ້ຈ້າງ **ຄ** ຢູ່ເຮືອນໃກ້ຄຽງກັນມາລ້ຽງມ້າໂຕດັ່ງກ່າວອີກ ເດືອນໜຶ່ງ 150.000 ກີບ (ລວມທັງອາຫານ, ຄ່າແຮງງານລ້ຽງ ແລະ ຄ່າປົກປັກຮັກສາມ້ານັ້ນ) ເປັນເວລາ ໜຶ່ງ ປີ ທີ່ **ຂ** ໄປເຮັດວຽກຢູ່ຕ່າງແຂວງ, ພໍຮອດກຳນົດເວລາ ສອງປີ **ກ** ກັບ ມາແຕ່ຕ່າງປະເທດ ຈະມາຊື້ມ້າຄືນ. ໃນກໍລະນີນີ້ **ຂ** ມີສິດທວງຄ່າປົກປັກຮັກສາມ້າ ເດືອນລະ 150.000 ກີບ x 12 ເດືອນ (ໄລຍະ 1 ປີ ທີ່ **ຂ** ຈ້າງ **ຄ** ມາລ້ຽງມ້າໃຫ້) = 1.800.000 ກີບ ບວກ ອີກ ໜຶ່ງປີ ທີ່ **ຂ** ໄດ້ລ້ຽງ ແລະ ປົກປັກຮັກສາ ມ້າໂຕນັ້ນ ກ່ອນທີ່ຈະໄປເຮັດວຽກຕ່າງແຂວງ ຈຳນວນ 1.800.000 ກີບ ລວມ ຄ່າປົກປັກຮັກສາ ແລະ ຄ່າລ້ຽງດູໄລຍະ ສອງປີ ທັງໝົດ ເປັນເງິນຈຳນວນ 3.600.000 ກີບ ນຳ **ກ** ໄດ້. **2. ກ** ຕົກລົງ ຂາຍຝາກລົດເກັງກັບ **ຂ** ພາຍໃນເວລາ ໜຶ່ງປີ ລາຄາ 85.000.000 ກີບ, ຕໍ່ມາ **ຂ** ໄດ້ນຳໃຊ້ລົດດັ່ງກ່າວ ໃນການທຽວການ ຈຶ່ງເຮັດໃຫ້ເຄື່ອງຈັກ ແລະ ຢາງລົດ ມີຫຼຸຍຫ້ຽນ ແລະ ເປ່ເພ ຊຶ່ງກໍລະນີນີ້ **ຂ** ບໍ່ມີສິດທວງເອົາເງິນຄ່າແປງລົດນຳ **ກ** ເພາະເປັນປົກກະຕິ ໃນການນຳໃຊ້ລົດມັນກໍຈະມີການຫຼຸຍຫ້ຽນ ແລະ ເປ່ເພ ສະນັ້ນ **ຂ** ໄດ້ຜົນປະໂຫຍດຈາກການນຳໃຊ້ລົດ ແລ້ວ ຕ້ອງໄດ້ຮັບຜິດຊອບຕໍ່ຄ່າໃຊ້ຈ່າຍຕ່າງໆເອງ.
ເຫດຜົນໃນການປັບປຸງ	ມາດຕານີ້ຮັກສາເນື້ອໃນ ແລະ ຫຼັກການເດີມຂອງ ມາດຕາ 55 ການປົກປັກຮັກສາຊັບສິ່ງຂອງທີ່ຂາຍຝາກ ຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນ ແລະ ນອກສັນຍາ ປີ 2008 ແລະ ໄດ້ປັບປຸງ ຄຳສັບ "**ຊັບສິ່ງຂອງ**" ເປັນ "**ຊັບ**" ເພື່ອໃຫ້ເປັນຄຳສັບທີ່ໃຊ້ລວມ ເພາະເປົ້າໝາຍຂອງສັນຍາຂາຍຝາກແມ່ນລວມເອົາທັງ ອະສັງຫາລິມະຊັບ ແລະ ສັງຫາລິມະຊັບ.

ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 500 ແລະ 501 ຂອງປະມວນກົດໝາຍແພ່ງ ແລະ ພານິດໄທ; ມາດຕາ 583 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 427 ແລະ 428 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ຊ. ສັນຍາກູ້ຢືມ

ມາດຕາ 430 ສັນຍາກູ້ຢືມ

ສັນຍາກູ້ຢືມ ແມ່ນ ການຕົກລົງຂອງຄູ່ສັນຍາ, ຊຶ່ງຜູ້ໃຫ້ຢືມໄດ້ເອົາເງິນ ຫຼື ຊັບສິ່ງຂອງ ຂອງຕົນ ໃຫ້ເປັນກຳມະສິດແກ່ຜູ້ກູ້ຢືມ ແລະ ຜູ້ກູ້ຢືມຕ້ອງສົ່ງຈຳນວນເງິນ ຫຼື ຊັບສິ່ງຂອງປະເພດທີ່ກູ້ຢືມນັ້ນ ຕາມຈຳນວນເທົ່າທຽມກັນ ແລະ ຄຸນນະພາບດຽວກັນ ຄືນແກ່ຜູ້ໃຫ້ຢືມ ຕາມເວລາທີ່ໄດ້ກຳນົດໄວ້ໃນສັນຍາ.

ຖ້າສັນຍາກູ້ຢືມ ຫາກບໍ່ມີກຳນົດເວລາການທວງໃຫ້ປະຕິບັດສັນຍາ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນມາດຕາ 380 ຂອງປະມວນກົດໝາຍສະບັບນີ້.

ການກູ້ຢືມເງິນ ຈະມີດອກເບ້ຍ ຫຼື ບໍ່ມີດອກເບ້ຍກໍໄດ້ ແຕ່ຕ້ອງກຳນົດໄວ້ໃນສັນຍາ. ໃນກໍລະນີທີ່ມີການໃຊ້ແທນໜີ້ສິນຊັກຊ້າ ຊຶ່ງສ້າງຄວາມອັບປະໂຫຍດແກ່ຜູ້ໃຫ້ຢືມ, ຜູ້ຢືມອາດມີຄວາມຮັບຜິດຊອບຕໍ່ຄ່າປ່ວຍການຊັບ.

ການກູ້ຢືມຊັບສິ່ງຂອງ ອາດມີຄ່າຕອບແທນ ຫຼື ບໍ່ມີກໍໄດ້ ແຕ່ຕ້ອງກຳນົດໄວ້ໃນສັນຍາ. ໃນກໍລະນີສິ່ງຊັບສິ່ງຂອງຊັກຊ້າ ຊຶ່ງສ້າງຄວາມອັບປະໂຫຍດແກ່ຜູ້ໃຫ້ຢືມ, ຜູ້ຢືມອາດມີຄວາມຮັບຜິດຊອບຕໍ່ຄ່າປ່ວຍການຊັບ.

ສັນຍາກູ້ຢືມ ຕ້ອງເຮັດເປັນລາຍລັກອັກສອນ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ກ່ຽວກັບ ນິຍາມຂອງສັນຍາກູ້ຢືມ, ກຳນົດເວລາ ແລະ ວິທີການຂອງການເຮັດສັນຍາກູ້ຢືມ ພ້ອມທັງຄວາມຮັບຜິດຊອບຂອງຄູ່ສັນຍາ.
ຕົວຢ່າງ	**1. ກ** ເຮັດສັນຍາກູ້ຢືມເງິນນຳ **ຂ** ຈຳນວນ 1.000.000 ກີບ ເມື່ອທັງສອງເຮັດສັນຍາ **ຂ** ຕ້ອງມອບເງິນຈຳນວນດັ່ງກ່າວໃຫ້ **ກ**. ເມື່ອຮອດກຳນົດເວລາທີ່ໄດ້ຕົກລົງກັນແລ້ວ **ກ** ຕ້ອງໃຊ້ແທນເງິນຈຳນວນດັ່ງກ່າວຄືນແກ່ **ຂ** ໃຫ້ຄົບຕາມຈຳນວນ 1.000.000 ກີບ. **2. ກ** ເຮັດສັນຍາກູ້ຢືມເງິນນຳ **ຂ** ຈຳນວນ 5.000.000 ກີບ ພາຍໃນກຳນົດເວລາ ໜຶ່ງປີ ຄິດໄລ່ດອກເບ້ຍ ເດືອນລະ 100.000 ກີບ (ໝາຍຄວາມວ່າ ຕົ້ນທຶນ 5.000.000 ກີບ ແລະ ດອກເບ້ຍ =1.200.000 ກີບ ຕໍ່ປີ). ເມື່ອຮອດກຳນົດເວລາ ໜຶ່ງປີ **ກ** ຕ້ອງໄດ້ສົ່ງ ຕົ້ນທຶນ ແລະ ດອກເບ້ຍ ຈຳນວນ 6.200.000 ກີບ. **3. ກ** ເຮັດສັນຍາກູ້ຢືມເຂົ້າສານນຳ **ຂ** ຈຳນວນ 100 ກິໂລກຼາມ ພາຍໃນກຳນົດເວລາ ຫົກເດືອນ ໂດຍບໍ່ມີດອກເບ້ຍ, ເມື່ອຮອດກຳນົດເວລາ ຫົກເດືອນ **ກ** ຕ້ອງໄດ້ສົ່ງເຂົ້າສານ ຈຳນວນ 100 ກິໂລກຼາມ ຄືນໃຫ້ກັບ **ຂ** ໃນປະລິມານ ແລະ ຄຸນນະພາບທີ່ຄ້າຍຄືກັນ.

	4. ກ ເຮັດສັນຍາກູ້ຢືມເຂົ້າສານນຳ **ຂ** ຈຳນວນ 500 ກິໂລກຼາມ ພາຍໃນກຳນົດເວລາ ຫົກເດືອນ ໂດຍມີດອກເບ້ຍເປັນເຂົ້າສານ ຈຳນວນ 50 ກິໂລກຼາມ, ເມື່ອຮອດກຳນົດເວລາ ຫົກເດືອນ **ກ** ຕ້ອງໄດ້ສົ່ງເຂົ້າສານ ຈຳນວນ 500 ກິໂລກຼາມ ແລະ ດອກເບ້ຍ 50 ກິໂລກຼາມ ລວມເປັນ 550 ກິໂລກຼາມ ຄືນໃຫ້ກັບ **ຂ** ໃນປະລິມານ ແລະ ຄຸນນະພາບທີ່ຄ້າຍຄືກັນ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ເນື້ອໃນມາດຕາ 56 ສັນຍາກູ້ຢືມ ຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາປີ 2008, ໂດຍໄດ້ແຍກໃຫ້ເຫັນນິຍາມ ແລະ ຫຼັກການຂອງການເຮັດສັນຍາກູ້ຢືມ ແລະ ໄດ້ແຍກວັກທີ່ເວົ້າເຖິງດອກເບ້ຍຂອງການກູ້ຢືມອອກເປັນມາດຕາໜຶ່ງສະເພາະ ເພື່ອໃຫ້ຈະແຈ້ງ ແລະ ສະດວກໃນເວລານຳໃຊ້. ການກູ້ຢືມຊັບສິ່ງຂອງໃນມາດຕານີ້ ໝາຍເຖິງ ການເອົາຊັບສິ່ງຂອງໃຫ້ຄົນອື່ນຢືມ ແລະ ຜູ້ຢືມ ຕ້ອງສົ່ງຊັບສິ່ງຂອງປະເພດທີ່ກູ້ຢືມນັ້ນ (ເປັນຊັບໃໝ່) ຕາມຈຳນວນເທົ່າທຽມ ແລະ ຄຸນນະພາບດຽວກັນ ຕາມກຳນົດເວລາທີ່ໄດ້ຕົກລົງກັນ ແຕ່ສຳລັບ ການຢືມຊັບໄປໃຊ້ໃນມາດຕາ 432 ໝາຍເຖິງ ການເອົາຊັບໃຫ້ຜູ້ອື່ນຢືມ ໂດຍບໍ່ຄິດໄລ່ຄ່າ ແລະ ຜູ້ຢືມຕ້ອງສົ່ງຊັບສິ່ງຂອງນັ້ນ ຄືນໃນສະພາບເດີມ (ຊັບທີ່ເປັນອັນເດີມ) ແລະ ກຳນົດເວລາທີ່ໄດ້ຕົກລົງກັນ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 463 ຂອງປະມວນກົດໝາຍແພ່ງຫວຽດນາມ; ມາດຕາ 650 ຂອງປະມວນກົດໝາຍແພ່ງ ແລະ ພານິດໄທ; ມາດຕາ 404 ແລະ 587 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 364, 369 ແລະ 430 ຂອງປະມວນກົດໝາຍແພ່ງ. ມາດຕາ 298 ຂອງປະມວນກົດໝາຍອາຍາ.
ຂໍ້ມູນອື່ນ ຫຼື ປະເພນີສານ	ໃນສັນຍາກູ້ຢືມນີ້ ການມອບຊັບສິ່ງຂອງ ມັນເປັນເງື່ອນໄຂຂອງການເກີດເປັນສັນຍາ.

ມາດຕາ 431 ດອກເບ້ຍຂອງການກູ້ຢືມເງິນ

ໃນກໍລະນີທີ່ມີການຕົກລົງຄິດໄລ່ດອກເບ້ຍ, ດອກເບ້ຍຂອງການກູ້ຢືມເງິນຈາກທະນາຄານ ຫຼື ສະຖາບັນການເງິນອື່ນ ທີ່ສ້າງຕັ້ງຢ່າງຖືກຕ້ອງຕາມກົດໝາຍ ໃຫ້ປະຕິບັດຕາມລະບຽບການຂອງທະນາຄານ ຫຼື ສະຖາບັນການເງິນອື່ນ ທີ່ໃຫ້ກູ້ຢືມເງິນນັ້ນ. ສຳລັບການກູ້ຢືມເງິນນອກທະນາຄານ ຫຼື ສະຖາບັນການເງິນອື່ນນັ້ນ ການຄິດໄລ່ດອກເບ້ຍ ບໍ່ໃຫ້ສູງກວ່າ ສາມສິບຫົກສ່ວນຮ້ອຍ ຕໍ່ປີ.

ໃນການກູ້ຢືມເງິນ ບໍ່ໃຫ້ເອົາດອກເບ້ຍເງິນກູ້ມາເປັນຕົ້ນທຶນ.

ເມື່ອຮອດກຳນົດເວລາໃຊ້ແທນຕາມທີ່ໄດ້ຕົກລົງກັນໄວ້ໃນສັນຍາແລ້ວ ຖ້າຜູ້ໃຫ້ຢືມ ຫາກບໍ່ຍອມຮັບເອົາເງິນຈາກຜູ້ກູ້ຢືມ ກໍຈະບໍ່ມີການຄິດໄລ່ດອກເບ້ຍໃຫ້.

ສຳລັບການກູ້ຢືມເງິນກັບການຈັດຕັ້ງຕ່າງປະເທດ ຫຼື ສາກົນນັ້ນ ການຄິດໄລ່ດອກເບ້ຍ ໃຫ້ປະຕິບັດຕາມການຕົກລົງຂອງຄູ່ສັນຍາ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ກ່ຽວກັບ ຂອບເຂດຂອງການກຳນົດດອກເບ້ຍຂອງການກູ້ຢືມ ຕາມກົດໝາຍ.

ຕົວຢ່າງ	**1.** **ກ** ໄດ້ກູ້ຢືມເງິນນຳ **ຂ** 50.000.000 ກີບ, ດອກເບ້ຍ 5 % ຕໍ່ເດືອນເທົ່າກັບ 60%ຕໍ່ປີ, ກຳນົດເວລາໜຶ່ງປີ ໃນນີ້ດອກເບ້ຍ= 2.500.000 ກີບ ຕໍ່ເດືອນ ຊຶ່ງໃນໄລຍະຜ່ານມາ **ກ** ໄດ້ຊຳລະດອກເບ້ຍແກ່ **ຂ** ແລ້ວຈຳນວນແປດເດືອນເທົ່າກັບ (2.500.000 ກີບ x 8 ເດືອນ) = 20.000.000 ກີບ ຖ້າມີການຂັດແຍ່ງກັນກ່ຽວກັບດອກເບ້ຍຕ້ອງໄດ້ນຳເອົາດອກເບ້ຍທີ່ຈ່າຍໄປແລ້ວນັ້ນມາຄິດໄລ່ ດອກເບ້ຍຕາມກົດໝາຍຄືນ ໃໝ່ໝົດ (50.000.000 ກີບ x 3% x 8 ເດືອນ) = 12.000.000 ກີບ ສະແດງວ່າ **ກ** ໃຊ້ແທນເກີນ (20.000.000 ກີບ - 12.000.000 ກີບ) = 8.000.000 ກີບ ນັ້ນໃຫ້ສົ່ງຄືນແກ່ **ກ**, ສ່ວນດອກເບ້ຍທີ່ຍັງຄ້າງ **ຂ** ມີສິດໄດ້ຮັບດອກເບ້ຍຕື່ມອີກຕາມກົດໝາຍ 3% ຕໍ່ເດືອນຊຶ່ງເທົ່າກັບ (50.000.000ກີບ x 3% x 4 ເດືອນ)= 6.000.000 ກີບ ແລະ ສືບຕໍ່ຄິດໄລ່ຈົນກວ່າ **ກ** ໄດ້ຊຳລະຄົບຖ້ວນຕາມຈຳນວນໜີ້ສິນຍັງຄ້າງ ຈົນຄົບທັງຕົ້ນທຶນ ແລະ ດອກເບ້ຍ. **2.** **ກ** ໄດ້ກູ້ຢືມເງິນນຳ **ຂ** 50.000.000 ກີບ, ດອກເບ້ຍ 3 % ຕໍ່ເດືອນເທົ່າກັບ 36% ຕໍ່ປີ, ກຳນົດເວລາໜຶ່ງປີ ໃນນີ້ດອກເບ້ຍຖືກເດືອນ 1.500.000 ກີບ ຊຶ່ງໃນໄລຍະຜ່ານມາ **ກ** ໄດ້ຊຳລະດອກເບ້ຍແກ່ **ຂ** ແລ້ວຈຳນວນແປດເດືອນເທົ່າກັບ (1.500.000 ກີບ x 8 ເດືອນ) = 12.000.000 ກີບ, ຫຼັງຈາກນັ້ນ **ກ** ບໍ່ໄດ້ຊຳລະທັງດອກເບ້ຍ ແລະ ຕົ້ນທຶນໃຫ້ **ຂ** ເລີຍ ຈຶ່ງມີຂໍ້ຂັດແຍ່ງຂຶ້ນ. ໃນກໍລະນີນີ້ ເຫັນວ່າການກຳນົດດອກເບ້ຍຂອງການກູ້ຢືມລະຫວ່າງ **ກ** ແລະ **ຂ** ແມ່ນ ບໍ່ເກີນທີ່ກົດໝາຍກຳນົດໃຫ້ ດອກເບ້ຍທີ່ **ກ** ໄດ້ຊຳລະໄປແລ້ວ ແປດເດືອນ ຈຶ່ງແລ້ວໄປ ບໍ່ຖືກນຳມາພິຈາລະນາຄືນ ສ່ວນດອກເບ້ຍທີ່ຍັງຄ້າງຈ່າຍ ອີກ ສີ່ເດືອນ (6.000.0000 ກີບ) ພ້ອມທັງຕົ້ນທຶນ 50.000.000 ກີບ ລວມເປັນເງິນ ຈຳນວນ 56.000.000 ກີບ (ແລະ ອາດມີຄ່າໃຊ້ຈ່າຍອື່ນໆອີກ) **ກ** ກໍຕ້ອງມີພັນທະໃນການຊຳລະໃຫ້ຄົບທັງຕົ້ນທຶນ ແລະ ດອກເບ້ຍ ໃຫ້ **ຂ** ຈົນໝົດ. **3.** **ກ** ໄດ້ກູ້ຢືມເງິນນຳ **ຂ** ຈຳນວນ 50.000.000 ກີບ, ດອກເບ້ຍ 3 % ຕໍ່ເດືອນເທົ່າກັບ (50.000.000 ກີບ x 3%)= 1.500.000 ກີບ, ກຳນົດເວລາໜຶ່ງປີ ໂດຍຕົກລົງໃຫ້ **ກ** ຊຳລະດອກເບ້ຍເປັນແຕ່ລະເດືອນ ເດືອນລະ 1.500.000 ກີບ ໃນການປະຕິບັດສັນຍາ **ກ** ບໍ່ໄດ້ຊຳລະ ດອກເປັນແຕ່ລະເດືອນ **ຂ** ຈຶ່ງເອົາດອກເບ້ຍເດືອນທຳອິດບວກຕົ້ນທຶນ (50.000.000 ກີບ +1.500.000 ກີບ) = 51.500.000 ກີບ ແລ້ວສືບຕໍ່ຄິດໄລ່ດອກເບ້ຍເດືອນທັດໄປ (51.500.000 ກີບ x 3%)= 1.545.000 ກີບ ແລະ ຄິດໄລ່ຕໍ່ໆໄປ ກໍລະນີນີ້ ກົດໝາຍຫ້າມບໍ່ໃຫ້ເຮັດ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 56 (ປັບປຸງ) ສັນຍາກູ້ຢືມ ຂອງກົດໝາຍວ່າດ້ວຍ ຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ປີ 2008 ໂດຍໄດ້ແຍກວັກທີ່ເວົ້າກ່ຽວກັບດອກເບ້ຍ ອອກມາກຳນົດເປັນມາດຕາໜຶ່ງ ເພື່ອໃຫ້ເຫັນແຈ້ງ ເພາະໄລຍະຜ່ານມາແມ່ນລວມຢູ່ໃນມາດຕາດຽວກັນ ແລະ ມີຄວາມສັບສົນ ສະນັ້ນ ຈຶ່ງໄດ້ກຳນົດເປັນມາດຕາໜຶ່ງສະເພາະໃຫ້ສະດວກກັບການນຳໃຊ້. ນອກຈາກນັ້ນຍັງໄດ້ກຳນົດການຄິດໄລ່ດອກເບ້ຍບໍ່ໃຫ້ສູງກວ່າ 36% ຕໍ່ປີ ເພື່ອໃຫ້ສອດຄ່ອງກັບປະມວນກົດໝາຍອາຍາ. ສຳລັບດອກເບ້ຍສະກຸນເງິນຕ່າງປະເທດກໍຄິດໄລ່ບໍ່ໃຫ້ເກີນ 36% ຕໍ່ປີ ເຊັ່ນ ດຽວກັນ.

ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 463 ຂອງປະມວນກົດໝາຍແພ່ງຫວຽດນາມ; ມາດຕາ 654 ຂອງປະມວນແພ່ງ ແລະ ພານິດໄທ; ມາດຕາ 138 ວັກສອງ ຂອງປະມວນກົດໝາຍແພ່ງເຢຍລະມັນ; ມາດຕາ 404-405 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ; ມາດຕາ 1 ຂອງກົດໝາຍວ່າດ້ວຍ ການກຳນົດດອກເບ້ຍຂອງຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 430 ຂອງປະມວນກົດໝາຍແພ່ງ; ມາດຕາ 298 ຂອງປະມວນກົດໝາຍອາຍາ; ມາດຕາ 41 ຂອງກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ ສະບັບປັບປຸງ ປີ 2018; ການກຳນົດອັດຕາດອກເບ້ຍ ຂອງກົດໝາຍທະນາຄານ ຍັງມີຜົນໃຊ້ໄດ້ເມື່ອ ປະມວນກົດໝາຍແພ່ງຖືກປະກາດໃຊ້.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ຍ. ສັນຍາຢືມຊັບໄປໃຊ້

ມາດຕາ 432 ສັນຍາຢືມຊັບໄປໃຊ້

ສັນຍາຢືມຊັບໄປໃຊ້ ແມ່ນ ການຕົກລົງຂອງຄູ່ສັນຍາ, ຊຶ່ງຜູ້ໃຫ້ຢືມໄດ້ມອບຊັບໃຫ້ຜູ້ຢືມໄປໃຊ້ໂດຍບໍ່ຄິດຄ່າ ແລະ ຜູ້ຢືມຕ້ອງສົ່ງຊັບດັ່ງກ່າວຄືນ ໃຫ້ແກ່ເຈົ້າຂອງຊັບໃນສະພາບເດີມ ຕາມກຳນົດເວລາທີ່ໄດ້ຕົກລົງກັນ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ກ່ຽວກັບ ຫຼັກການ ແລະ ເງື່ອນໄຂຂອງການຢືມຊັບສິ່ງຂອງໄປໃຊ້ ລວມທັງສາຍພົວພັນສິດ ແລະ ພັນທະຂອງຄູ່ສັນຍາ.
ຕົວຢ່າງ	**1. ກ** ຢືມລົດຈັກນຳ **ຂ** ໄປຕະຫຼາດ ຊຶ່ງບໍ່ໄດ້ຕົກລົງກ່ຽວກັບຄ່າຢືມ ແລະ ກຳນົດເວລາຢືມຈະແຈ້ງ, **ຂ** ຕ້ອງມອບລົດຈັກໃຫ້ **ກ**, ສ່ວນ **ກ** ພາຍຫຼັງນຳໃຊ້ໄປຕະຫຼາດກັບມາແລ້ວ **ກ** ຕ້ອງນຳເອົາລົດມາສົ່ງຄືນໃຫ້ **ຂ**. **2. ກ** (ນ້ອງຊາຍ) ຢືມລົດໃຫຍ່ **ຂ** (ອ້າຍ) ໄປຢາມພີ່ນ້ອງປ່ວຍຢູ່ຕ່າງແຂວງ ເປັນເວລາ 5 ວັນ ແຕ່ວັນທີ 1 ມີຖຸນາ 2020 ຮອດ ວັນທີ 6 ມີຖຸນາ 2020, ໃນເວລາທີ່ເດີນໄປຕ່າງແຂວງນັ້ນ ຢາງລົດໄດ້ຮົ່ວ ແລະ ໃນວັນທີ 5 ມີຖຸນາ 2020 ເວລາທີ່ເດີນທາງກັບ ເບກລົດຄັນດັ່ງກ່າວໄດ້ເປ່ເພ, ໃນກໍລະນີເຫຼົ່ານີ້ **ກ** ຜູ້ຢືມ ຕ້ອງຮັບຜິດຊອບຄ່າໃຊ້ຈ່າຍໃນການແປງລົດເອງ ແລະ ນຳມາສົ່ງ **ຂ** ໃນສະພາບປົກກະຕິ ໃນວັນທີ 6 ມີຖຸນາ 2020. ພາຍຫຼັງສົ່ງລົດໃຫ້ **ຂ** ແລ້ວສັນຍາໄດ້ຖືກປະຕິບັດສຳເລັດ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກມາດຕາ 58 ສັນຍາຢືມຊັບສິ່ງຂອງທີ່ໃຊ້ ຂອງກົດໝາຍວ່າດ້ວຍ ຂໍ້ຜູກພັນໃນ ແລະ ນອກສັນຍາ ປີ 2008, ໂດຍໄດ້ປັບປຸງ ຄຳສັບວ່າ "**ຊັບສິ່ງຂອງ**" ມາເປັນ "**ຊັບ**" ເພື່ອໃຫ້ເປັນຄຳສັບລວມ ແລະ ໃຫ້ສອດຄ່ອງກັບນິຍາມ ຂອງຄຳວ່າ "**ຊັບ**" ຕາມທີ່ກຳນົດໄວ້ໃນມາດຕາ 227 ຂອງປະມວນກົດໝາຍສະບັບນີ້. ສັນຍາຢືມຊັບໄປໃຊ້ ມີຜົນສັກສິດທາງດ້ານກົດໝາຍ: (1). ມີການຕົກລົງຂອງຄູ່ສັນຍາ, (2). ໄດ້ມີການມອບຊັບໃຫ້ແກ່ກັນ (3). ຜູ້ຢືມຕ້ອງສົ່ງຊັບຄືນໃນສະພາບເດີມ ໃຫ້ແກ່ຜູ້ໃຫ້ຢືມ.

ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 227, 433 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ນອກຈາກການຕົກລົງເຫັນດີຂອງຄູ່ສັນຍາແລ້ວ ການມອບຊັບໃຫ້ແກ່ກັນກໍເປັນເງື່ອນໄຂອີກອັນໜຶ່ງທີ່ພາໃຫ້ເກີດສັນຍາ.

ມາດຕາ 433 ຄວາມຮັບຜິດຊອບຂອງຜູ້ຢືມ

ໃນກໍລະນີທີ່ຊັບ ຫາກຖືກເສຍຫາຍ ຫຼື ເປ່ເພ ໃນເວລາທີ່ຢືມໄປໃຊ້ນັ້ນ, ຜູ້ຢືມ ຕ້ອງຮັບຜິດຊອບໃຊ້ແທນຄ່າເສຍຫາຍດັ່ງກ່າວ, ເວັ້ນເສຍແຕ່ຫາກໄດ້ຕົກລົງກັນໄວ້ເປັນຢ່າງອື່ນ.

ຖ້າຜູ້ຢືມ ຫາກບໍ່ມີຄວາມສາມາດສົ່ງຊັບສິ່ງຂອງທີ່ຢືມໄປໃຊ້ນັ້ນຄືນ ຫຼື ເຮັດໃຫ້ຊັບສິ່ງຂອງນັ້ນໃຊ້ການບໍ່ໄດ້, ຜູ້ກ່ຽວອາດໃຊ້ແທນດ້ວຍເງິນ ຫຼື ດ້ວຍຊັບອື່ນ ຕາມການເຫັນດີຂອງຜູ້ໃຫ້ຢືມ ແລະ ຕາມລາຄາໃນທ້ອງຕະຫຼາດໃນເວລານັ້ນ.

ຜູ້ຢືມບໍ່ມີສິດເອົາຊັບທີ່ຢືມມານັ້ນໃຫ້ຜູ້ອື່ນຢືມຕໍ່.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ກ່ຽວກັບ ຄວາມຮັບຜິດຊອບຂອງຜູ້ຢືມ ໃນການນຳໃຊ້ຊັບທີ່ຢືມ ແລະ ຂໍ້ຫ້າມໃນການນຳໃຊ້ຊັບທີ່ຢືມ.
ຕົວຢ່າງ	**1. ກ** ຢືມລົດຈັກນຳ **ຂ** ໄປນຳໃຊ້ໃນການໄປຮຽນ ເປັນເວລາ ສາມເດືອນ, ໃນໄລຍະ ສາມເດືອນ ນັ້ນ **ກ** ຕ້ອງໄດ້ປົກປັກຮັກສາລົດຈັກດັ່ງກ່າວ ໃຫ້ຢູ່ໃນສະພາບປົກກະຕິ, ຖ້າມີການເປ່ເພ ເສຍຫາຍ **ກ** ຕ້ອງຮັບຜິດຊອບຕໍ່ການສ້ອມແປງໃຫ້ຢູ່ໃນສະພາບປົກກະຕິ ແລະ ສົ່ງຄືນໃຫ້ **ຂ** ພາຍໃນກຳນົດເວລາ. **2. ກ** ຢືມເຄື່ອງຈັກເກັບກ່ຽວເຂົ້ານຳ **ຂ** ໄປນຳໃຊ້ ເປັນເວລາ ສາມເດືອນ, ພາຍຫຼັງ ສອງເດືອນ **ກ** ໄດ້ເກັບກ່ຽວເຂົ້າສຳເລັດ ແລ້ວເອົາເຄື່ອງຈັກດັ່ງກ່າວໃຫ້ **ຄ** ຢືມຕໍ່ ໂດຍບໍ່ໄດ້ຮັບການເຫັນດີ ຈາກ **ຂ**, ຫຼັງຈາກທີ່ **ຂ** ຮູ້ **ຂ** ສາມາດຍົກເລີກສັນຍາກັບ **ກ** ແລະ ທວງເອົາເຄື່ອງຈັກດັ່ງກ່າວນັ້ນຄືນ. ໃນກໍລະນີທີ່ **ກ** ຍັງເອົາຊັບໃຫ້ **ຄ** ຢືມຕໍ່ ເມື່ອ **ຄ** ໄດ້ນຳໃຊ້ເຄື່ອງຈັກດັ່ງກ່າວແລ້ວເຮັດໃຫ້ເຄື່ອງຈັກດັ່ງກ່າວເປ່ເພ ບໍ່ສາມາດໃຊ້ງານໄດ້, ກໍລະນີນີ້ **ກ** ກໍຕ້ອງຮັບຜິດຊອບໃຊ້ຄວາມເສຍຫາຍທີ່ເກີດຂຶ້ນ ໂດຍອາດຈະທົດແທນຄ່າເສຍຫາຍເປັນຈຳນວນເງິນ ຫຼື ເອົາເຄື່ອງຈັກ ໃໝ່ມາແທນໃຫ້ **ຂ**.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 59 ຄວາມຮັບຜິດຊອບຂອງຜູ້ຢືມ ຂອງກົດໝາຍວ່າດ້ວຍ ຂໍ້ຜູກພັນໃນ ແລະ ນອກສັນຍາປີ 2008, ໂດຍໄດ້ປັບປຸງຄຳສັບວ່າ "**ຊັບສິ່ງຂອງ**" ມາເປັນ "**ຊັບ**" ເພື່ອໃຫ້ເປັນຄຳສັບລວມ ແລະ ສອດຄ່ອງກັບນິຍາມ ຂອງຄຳວ່າ "**ຊັບ**" ຕາມທີ່ກຳນົດໄວ້ໃນມາດຕາ 227 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 400, 415, 416 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 227 ແລະ 432 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ດ. ສັນຍາເຊົ່າຊັບ

ມາດຕາ 434 ສັນຍາເຊົ່າຊັບ

ສັນຍາເຊົ່າຊັບ ແມ່ນ ການຕົກລົງຂອງຄູ່ສັນຍາ, ຊຶ່ງຜູ້ໃຫ້ເຊົ່າ ໄດ້ມອບຊັບທີ່ເປັນກຳມະສິດຂອງຕົນ ໃຫ້ຜູ້ເຊົ່າ ນຳໃຊ້ຊົ່ວຄາວ ແລະ ຜູ້ເຊົ່າ ຕ້ອງນຳໃຊ້ຢ່າງຖືກຕ້ອງ ແລະ ສອດຄ່ອງກັບສັນຍາ ແລະ ຄຸນປະໂຫຍດຂອງຊັບທີ່ເຊົ່າ, ຈ່າຍຄ່າເຊົ່າຕາມລາຄາ ແລະ ກຳນົດເວລາທີ່ໄດ້ຕົກລົງກັນ.

ໃນກໍລະນີທີ່ສັນຍາເຊົ່າຊັບ ຫາກບໍ່ມີກຳນົດເວລານັ້ນ, ຜູ້ໃຫ້ເຊົ່າ ຫຼື ຜູ້ເຊົ່າມີສິດຍົກເລີກສັນຍາໄດ້ທຸກເວລາ ແຕ່ຕ້ອງແຈ້ງໃຫ້ຄູ່ສັນຍາຊາບລ່ວງໜ້າກ່ອນ ສາມເດືອນ ສຳລັບອະສັງຫາລິມະຊັບ ເຊັ່ນ ທີ່ດິນ, ເຮືອນ, ອາຄານ ແລະ ໜຶ່ງເດືອນ ສຳລັບສັງຫາລິມະຊັບ ເຊັ່ນ ລົດ, ເຮືອ, ສັດ.

ສຳລັບການເຊົ່າທີ່ດິນປູກຝັງ ໃຫ້ແຈ້ງຍົກເລີກສັນຍາໃນທ້າຍລະດູເກັບກ່ຽວ ຫຼືກ່ອນເລີ່ມລະດູປູກຝັງໃໝ່.

ກ່ອນຈະມອບຊັບໃຫ້ເຊົ່ານັ້ນ ຜູ້ໃຫ້ເຊົ່າຕ້ອງແຈ້ງຈຸດບົກພ່ອງ ຫຼື ຈຸດພິເສດຂອງຊັບນັ້ນໃຫ້ຜູ້ເຊົ່າຊາບ.

ໃນກໍລະນີທີ່ຜູ້ໃຫ້ເຊົ່າ ຫາກບໍ່ໄດ້ແຈ້ງຈຸດບົກພ່ອງ ຫຼື ຈຸດພິເສດຂອງຊັບນັ້ນແລ້ວ, ຖ້າຫາກມີການເສຍຫາຍ ຫຼື ເປ່ເພຍ້ອນການບໍ່ໄດ້ແຈ້ງນັ້ນ, ຜູ້ເຊົ່າກໍຈະບໍ່ມີຄວາມຮັບຜິດຊອບແຕ່ຢ່າງໃດ.

ສັນຍາເຊົ່າຊັບ ຕ້ອງເຮັດເປັນລາຍລັກອັກສອນ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ກ່ຽວກັບ ຫຼັກການ, ເງື່ອນໄຂຂອງສັນຍາເຊົ່າຊັບ ລວມທັງສາຍພົວພັນສິດ ແລະ ພັນທະຂອງຄູ່ສັນຍາ.
ຕົວຢ່າງ	**1. ກ** ໄດ້ເອົາທີ່ດິນ ແລະ ເຮືອນນຳທີ່ເປັນກຳມະສິດຂອງຕົນໃຫ້ **ຂ** ເຊົ່າ,ຄ່າເຊົ່າປີລະ 5.000.000 ກີບ, ກຳນົດເວລາ ສອງປີ, **ກ** ຕ້ອງໄດ້ມອບທີ່ດິນ ແລະ ເຮືອນໃຫ້ **ຂ** ນຳໃຊ້, ສ່ວນ **ຂ** ຕ້ອງສົ່ງທີ່ດິນ ແລະ ເຮືອນຄືນ ພ້ອມທັງຈ່າຍຄ່າເຊົ່າຕາມລາຄາ ແລະ ກຳນົດເວລາທີ່ຕົກລົງກັນ. **2.** ໃນວັນທີ 1 ມັງກອນ 2021 **ກ** ໄດ້ເອົາລົດທີ່ເປັນກຳມະສິດຂອງຕົນ ໃຫ້ **ຂ** ເຊົ່າເພື່ອນຳໃຊ້ໃນການເຄື່ອນໄຫວວຽກ ຢູ່ຕ່າງແຂວງ ຊຶ່ງໄດ້ຕົກລົງລາຄາເຊົ່າເດືອນລະ 5.000.000 ກີບ, ຕໍ່ມາ **ກ** ຮູ້ວ່າຕົນຈະຖືກໄປເຄື່ອນໄຫວວຽກຢູ່ຕ່າງປະເທດໃນຕົ້ນປີ 2022, ສະນັ້ນວັນທີ 1 ພະຈິກ 2021 **ກ** ຈຶ່ງໄດ້ຂໍຍົກເລີກສັນຍານຳ **ຂ**. **3. ກ** ໄດ້ຕົກລົງ ເອົາທີ່ດິນນາຂອງຕົນໃຫ້ **ຂ** ເຊົ່າເພື່ອປູກເຂົ້າ ເລີ່ມແຕ່ວັນທີ 1 ມັງກອນ 2021, ມາຮອດວັນທີ 1 ຕຸລາ 2022 **ຂ** ໄດ້ຊື້ທີ່ດິນນາ ນຳ **ຄ** ແລະ **ຂ** ໄດ້ແຈ້ງໃຫ້ **ກ** ຮັບຊາບ ວັນທີ 30 ຕຸລາ 2022 ກ່ຽວກັບການເຮັດຍົກເລີກສັນຍາເຊົ່າທີ່ດິນນາລະຫວ່າງ **ກ** ແລະ **ຂ**. **4. ກ** ໄດ້ຕົກລົງເອົາລົດທີ່ເປັນກຳມະສິດຂອງຕົນໃຫ້ **ຂ** ເຊົ່າ ເພື່ອໄປທ່ຽວຊົມຕົວເມືອງ ຊຶ່ງ **ກ** ຜູ້ໃຫ້ເຊົ່າ ໄດ້ແຈ້ງ **ຂ** ວ່າ ລົດຄັນດັ່ງກ່າວມີລັກສະນະພິເສດ ຄັນເລັ່ງ ແລະ ເບກຂ້ອນຂ້າງຈະຕົດ ແຕ່ **ກ** ກໍຕົກລົງວ່າຈະເຊົ່າ ໃນເວລາທີ່ຂັບຂີ່ລົດຊົມຕົວເມືອງນັ້ນ ມີໝາແລ່ນມາຕັດໜ້າລົດ ເຮັດໃຫ້ລົດເສຍຫຼັກໄປຕຳເອົາຕົ້ນໄມ້ຂ້າງທາງ ເຮັດໃຫ້ລົດເປ່ເພເສຍຫາຍ ແລະ ຕ້ອງສ້ອມແປງ ເປັນຈຳນວນ 8.000.000 ກີບ ເງິນຈຳນວນນີ້ **ຂ** ຕ້ອງເປັນ

	ຜູ້ຮັບຜິດຊອບເອງ ເນື່ອງຈາກວ່າ **ກ** ໄດ້ແຈ້ງຄວາມປົກຜ່ອງຂອງລົດແລ້ວ. ໃນກໍລະນີ ທີ່ **ກ** ບໍ່ໄດ້ແຈ້ງຂໍ້ບົກພ່ອງ **ກ** ກໍຕ້ອງເປັນຜູ້ຮັບຜິດຊອບຕໍ່ຄວາມເສຍຫາຍດັ່ງກ່າວ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກມາດຕາ 60 ສັນຍາເຊົ່າຊັບສິ່ງຂອງ ຂອງກົດໝາຍວ່າດ້ວຍ ຂໍ້ຜູກພັນໃນ ແລະ ນອກສັນຍາປີ 2008, ໂດຍໄດ້ປັບປຸງ ຄຳສັບວ່າ "**ຊັບສິ່ງຂອງ**" ເປັນ "**ຊັບ**" ເພື່ອໃຫ້ເປັນຄຳສັບລວມ ແລະ ສອດຄ່ອງກັບນິຍາມຂອງຄຳວ່າ "**ຊັບ**" ຕາມທີ່ກຳນົດໄວ້ໃນມາດຕາ 227 ຂອງປະມວນກົດໝາຍແພ່ງ. ນອກຈາກນີ້ ຍັງໄດ້ເພີ່ມກ່ຽວກັບ ຫຼັກການຂອງການເຮັດສັນຍາເຊົ່າຊັບ ຊຶ່ງມີຄວາມຈຳເປັນທີ່ຕ້ອງໄດ້ເຮັດເປັນລາຍລັກອັກສອນ ທັງເປັນການປົກປ້ອງທັງຜູ້ໃຫ້ເຊົ່າ ແລະ ຜູ້ເຊົ່າ. ການຍົກເລີກສັນຍາເຊົ່າອະສັງຫາລິມະຊັບ (ທີ່ດິນ) ທີ່ບໍ່ມີກຳນົດເວລາ ຕາມທີ່ໄດ້ກຳນົດໄວ້ ໃນວັກສອງ ຂອງມາດຕານີ້ ໃຫ້ແຈ້ງການຍົກເລີກສັນຍາລ່ວງໜ້າກ່ອນສາມເດືອນ ເວັ້ນເສຍແຕ່ສຳລັບການເຊົ່າທີ່ດິນເພື່ອປູກຝັງໃຫ້ແຈ້ງຍົກເລີກສັນຍາໃນທ້າຍລະດູເກັບກ່ຽວ ຫຼື ກ່ອນລະດູປູກຝັງໃໝ່. ສັນຍາເຊົ່າຊັບ ມີຜົນສັກສິດທາງດ້ານກົດໝາຍ: (1). ມີການຕົກລົງເປັນລາຍລັກອັກສອນຂອງຄູ່ສັນຍາ (2). ໄດ້ມີການມອບຊັບໃຫ້ແກ່ກັນ
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 601, 617 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 435, 436, 437 ແລະ 438 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 435 ການຈ່າຍຄ່າເຊົ່າຊັບ

ໃນການເຊົ່າຊັບນັ້ນ ຜູ້ເຊົ່າອາດຈ່າຍເງິນຄ່າເຊົ່າເປັນວັນ, ເປັນສັບປະດາ ຫຼື ອາທິດ, ເປັນເດືອນ, ເປັນປີ ຫຼື ຈ່າຍລ່ວງໜ້າກ່ອນກໍໄດ້. ໃນກໍລະນີທີ່ຜູ້ເຊົ່າ ໄດ້ຈ່າຍລ່ວງໜ້າໄປແລ້ວ ຫາກມີການຍົກເລີກສັນຍາກ່ອນກຳນົດເວລາ, ຜູ້ໃຫ້ເຊົ່າ ຕ້ອງສົ່ງເງິນຄ່າເຊົ່າສ່ວນທີ່ເຫຼືອ ທີ່ໄດ້ຈ່າຍລ່ວງໜ້ານັ້ນຄືນ ແລະ ຜູ້ກ່ຽວກໍມີສິດທວງເອົາຄ່າເສຍຫາຍຈາກຜູ້ເຊົ່າ ທີ່ໄດ້ລະເມີດສັນຍານັ້ນໄດ້.

ໃນກໍລະນີທີ່ຜູ້ໃຫ້ເຊົ່າຫາກລະເມີດສັນຍາ ຜູ້ເຊົ່າມີສິດທວງເອົາເງິນຄ່າເຊົ່າສ່ວນທີ່ເຫຼືອທີ່ໄດ້ຈ່າຍລ່ວງໜ້າໄປແລ້ວນັ້ນ ພ້ອມທັງຄ່າເສຍຫາຍຈາກຜູ້ໃຫ້ເຊົ່າອີກດ້ວຍ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ກ່ຽວກັບ ຮູບການ, ກຳນົດເວລາໃນການຈ່າຍຄ່າເຊົ່າຊັບ, ລວມທັງການປົກປ້ອງສິດ ຂອງຄູ່ສັນຍາ.
ຕົວຢ່າງ	**1. ກ** ເຊົ່າເຮືອນນຳ **ຂ** ເປັນເວລາ ໜຶ່ງປີ ຊຶ່ງຈ່າຍເງິນຄ່າເຊົ່າລ່ວງໜ້າກ່ອນ ໜຶ່ງປີ ຈຳນວນ 12.000.000 ກີບ, **ກ** ຢູ່ມາໄດ້ ແປດເດືອນ ແລ້ວມີແຜນຈະໄປຮຽນຕໍ່ຕ່າງປະເທດ. ກໍລະນີນີ້ **ກ** ມີສິດທວງເງິນທີ່ຍັງບໍ່ທັນໄດ້ຢູ່ ສີ່ເດືອນ ເປັນຈຳນວນເງິນ 4.000.000 ກີບ ນຳ **ຂ** ຄືນ ແລະ **ຂ** ກໍມີສິດຮຽກຮ້ອງຄ່າເສຍຫາຍນຳ **ກ** ຈຳນວນ 1.000.000 ກີບ ເທົ່າກັບຄ່າເຊົ່າ ໜຶ່ງເດືອນ ເນື່ອງຈາກຍົກເລີກສັນຍາກ່ອນກຳນົດເວລາ ແລະ **ຂ** ຕ້ອງໃຊ້ເວລາເພື່ອຊອກຫາຜູ້ເຊົ່າໃໝ່ ເຮັດໃຫ້ **ຂ** ຂາດລາຍຮັບໄປ ໜຶ່ງເດືອນ.

	2. ກ ເຊົ່າເຮືອນນຳ **ຂ** ເປັນເວລາ ສາມປີ ຊຶ່ງຈ່າຍເງິນຄ່າເຊົ່າລ່ວງໜ້າກ່ອນ ຈຳນວນ 15.000.000, ຕໍ່ມາ ສອງປີ **ຂ** ມີແຜນຈະເອົາເຮືອນຫຼັງດັ່ງກ່າວ ສ້າງເປັນຮ້ານອາຫານ ຈຶ່ງໄດ້ມາແຈ້ງ ໃຫ້ **ກ** ຍ້າຍອອກ. ກໍລະນີນີ້ **ກ** ມີສິດ ທວງເງິນທີ່ຈ່າຍແຕ່ຍັງບໍ່ທັນໄດ້ຢູ່ ໜຶ່ງປີ ເປັນຈຳນວນເງິນ 5.000.000 ກີບ ນຳ **ຂ** ຄືນ ພ້ອມດຽວກັນກໍ່ຍັງສາມາດທວງເອົາຄ່າເສຍຫາຍ ຄ່າເສຍ ເວລາ ທີ່ **ຂ** ຍົກເລີກສັນຍາກ່ອນກຳນົດເວລາໄດ້ຕື່ມອີກ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກມາດຕາ 61 ກົດໝາຍວ່າດ້ວຍ ຂໍ້ຜູກພັນໃນ ແລະ ນອກສັນຍາປີ 2008, ໂດຍໄດ້ປັບປຸງ ຄຳສັບວ່າ "**ຊັບສິ່ງຂອງ**" ມາເປັນ "**ຊັບ**" ເພື່ອໃຫ້ສອດຄ່ອງກັບນິຍາມ ຂອງຄຳວ່າ "**ຊັບ**" ຕາມທີ່ກຳນົດໄວ້ໃນ ມາດຕາ 227 ຂອງປະມວນກົດໝາຍແພ່ງ ແລະ ປັບຄຳສັບ "**ມື້**" ເປັນ "**ວັນ**", "**ອາທິດ**" ເປັນ "**ສັບປະດາ ຫຼື ອາທິດ**" ໃຫ້ສອດຄ່ອງກັບມາດຕາ 45 ຂອງ ປະມວນກົດໝາຍແພ່ງ.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງ ຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 45, 366, 393, 471 ແລະ 479 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 436 ການນຳໃຊ້ ແລະ ການສ້ອມແປງຊັບທີ່ເຊົ່າ

ຜູ້ເຊົ່າ ຕ້ອງນຳໃຊ້ຊັບທີ່ເຊົ່ານັ້ນ ໃຫ້ສອດຄ່ອງກັບສັນຍາ ແລະ ຄຸນປະໂຫຍດຂອງຊັບທີ່ເຊົ່າ, ຄຸ້ມ ຄອງ, ຮັກສາ ໃຫ້ຢູ່ໃນສະພາບອັນເໝາະສົມ ແລະ ສົ່ງຊັບນັ້ນຄືນແກ່ຜູ້ໃຫ້ເຊົ່າໃນສະພາບເດີມ ພາຍຫຼັງທີ່ສັນ ຍານັ້ນໄດ້ສິ້ນສຸດລົງ. ຜູ້ເຊົ່າ ຕ້ອງຮັບຜິດຊອບຕໍ່ການເສຍຫາຍ ຫຼື ເປ່ເພ ທີ່ເນື່ອງມາຈາກຄວາມຜິດຂອງຜູ້ກ່ຽວ.

ໃນການນຳໃຊ້ຊັບທີ່ເຊົ່ານັ້ນ ຖ້າຫາກມີການສ້ອມແປງນ້ອຍ ເຊັ່ນ ແປງກະແจ, ຢາເຮືອນຮົ່ວ, ຈອດຢາງລົດ ກໍຈະຕົກເປັນພາລະຂອງຜູ້ເຊົ່າ. ສ່ວນການສ້ອມແປງໃຫຍ່ ເຊັ່ນ ຮື້ຫຼັງຄາເຮືອນ, ຍົກຈັກລົດ ນັ້ນ ກໍຈະຕົກເປັນພາລະຂອງຜູ້ໃຫ້ເຊົ່າ.

ຖ້າຜູ້ເຊົ່າ ຫາກໄດ້ຈ່າຍຄ່າສ້ອມແປງໃຫຍ່ດ້ວຍທຶນຂອງຕົນເອງຕາມການເຫັນດີຂອງຜູ້ໃຫ້ເຊົ່າ ຜູ້ ເຊົ່າ ມີສິດທວງເອົາຄ່າໃຊ້ຈ່າຍດັ່ງກ່າວ ຈາກຜູ້ໃຫ້ເຊົ່າ ຫຼື ຈະຄິດໄລ່ເປັນຄ່າເຊົ່າ ກໍໄດ້.

ໃນກໍລະນີທີ່ຜູ້ເຊົ່າ ໄດ້ສະເໜີໃຫ້ມີການສ້ອມແປງໃຫຍ່ແລ້ວ ແຕ່ຍັງບໍ່ໄດ້ສ້ອມແປງ ທັງໆທີ່ຜູ້ ໃຫ້ເຊົ່າມີຄວາມສາມາດ, ຜູ້ເຊົ່າມີສິດຍົກເລີກສັນຍາໄດ້ ແລະ ທວງເອົາຄ່າເຊົ່າທີ່ໄດ້ຈ່າຍລ່ວງໜ້ານັ້ນຄືນ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ກ່ຽວກັບ ຫຼັກການຂອງສັນຍາເຊົ່າຊັບ ພ້ອມທັງຄວາມຮັບ ຜິດຊອບຂອງ ຜູ້ໃຫ້ເຊົ່າ ແລະ ຜູ້ເຊົ່າຕໍ່ຊັບທີ່ເຊົ່ານັ້ນ.
ຕົວຢ່າງ	**1. ກ** ເຊົ່າລົດ **ຂ** ເປັນເວລາ ໜຶ່ງປີ ເພື່ອນຳໃຊ້ໃນການເຄື່ອນໄຫວວຽກ ເນື່ອງ ຈາກລົດຄັນດັ່ງກ່າວເປັນລົດທີ່ນຳໃຊ້ຕະຫຼອດ, ນຳໃຊ້ໄປໄດ້ໄລຍະໜຶ່ງ ເຮັດໃຫ້ ຢາງລົດມີການລຸ້ຍຫ້ຽນ, ເບັກເປ່ເພ, **ກ** ຜູ້ເຊົ່າ ທີ່ຊົມໃຊ້ເປັນ ປະຈຳ ຕ້ອງໄດ້ຮັບຜິດຊອບໃນການສ້ອມແປງເອງ. ເມື່ອຄົບກຳນົດເວລາ ໜຶ່ງປີ **ກ** ຕ້ອງສົ່ງລົດຄືນໃຫ້ **ຂ** ໃນສະພາບທີ່ປົກກະຕິ ແລະ ສັນຍາເຊົ່າ ລົດ ລະຫວ່າງ **ກ** ແລະ **ຂ** ສິ້ນສຸດ. **2. ກ** ເຊົ່າເຮືອນ **ຂ** ເປັນເວລາ ສາມປີ ເພື່ອເປີດຮ້ານອາຫານ ມາຮອດປີທີ 2 **ກ** ມີແຜນຈະຕໍ່ເຕີມຮ້ານອອກໄປອີກ ມູນຄ່າການຕໍ່ເຕີມທັງໝົດແມ່ນ 7.000.000 ກີບ ຊຶ່ງ **ກ** ໄດ້ສະເໜີຫາ **ຂ** ເຈົ້າຂອງເຮືອນ ແລະ **ຂ** ກໍ ເຫັນດີ

	ສະນັ້ນ ກ ຈຶ່ງໄດ້ລົງມືປະຕິບັດ ພາຍຫຼັງທີ່ ກ ຕໍ່ເຕີມສຳເລັດ ຈຶ່ງໄດ້ມາທວງເອົາຄ່າໃຊ້ຈ່າຍນຳ ຂ ຜູ້ໃຫ້ເຊົ່າ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກມາດຕາ 62 ການນຳໃຊ້ ແລະ ການສ້ອມແປງຊັບສິ່ງຂອງທີ່ເຊົ່າ ຂອງກົດໝາຍວ່າດ້ວຍ ຂໍ້ຜູກພັນໃນ ແລະ ນອກສັນຍາປີ 2008, ໂດຍໄດ້ປັບປຸງ ຄຳສັບວ່າ "ຊັບສິ່ງຂອງ" ມາເປັນ "ຊັບ" ເພື່ອໃຫ້ສອດຄ່ອງກັບນິຍາມ ຂອງຄຳວ່າ "ຊັບ" ຕາມທີ່ກຳນົດໄວ້ໃນມາດຕາ 227 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 606 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 393, 432, 471, 479 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 437 ການປ່ຽນເຈົ້າກຳມະສິດໃນຊັບທີ່ເຊົ່າ

ໃນກໍລະນີທີ່ຜູ້ໃຫ້ເຊົ່າຫາກໄດ້ມອບ ຫຼື ຂາຍຊັບທີ່ເຊົ່ານັ້ນໃຫ້ບຸກຄົນອື່ນ, ສັນຍາເຊົ່າຊັບນັ້ນ ກໍ ມີຜົນໃຊ້ໄດ້ສຳລັບຜູ້ຮັບ ຫຼື ຜູ້ຊື້ທີ່ເປັນເຈົ້າກຳມະສິດໃໝ່, ແຕ່ຜູ້ໃຫ້ເຊົ່າຕ້ອງແຈ້ງໃຫ້ເຈົ້າກຳມະສິດໃໝ່ຊາບ ກ່ອນວ່າຊັບດັ່ງກ່າວຍັງຢູ່ໃນການນຳໃຊ້ຂອງຜູ້ເຊົ່າຢູ່.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ກ່ຽວກັບ ສິດຂອງເຈົ້າຂອງຊັບເດີມໃນການຊື້ຂາດຊັບທີ່ເປັນເປົ້າໝາຍຂອງການເຊົ່າ ແລະ ພັນທະໃນການແຈ້ງກ່ຽວກັບການປ່ຽນແປງຊັບດັ່ງກ່າວໃຫ້ຜູ້ເຊົ່າ ແລະ ເຈົ້າກຳມະສິດໃໝ່ຊາບ. ເຖິງວ່າຈະມີການຊື້ຂາດຊັບທີ່ເປັນເປົ້າໝາຍແລ້ວກໍ່ຕາມ ແຕ່ສັນຍາເຊົ່າຍັງສືບຕໍ່ມີຜົນສຳລັບຜູ້ເຊົ່າ ແລະ ເຈົ້າກຳມະສິດໃໝ່.
ຕົວຢ່າງ	**1. ກໍລະນີແຈ້ງການປ່ຽນເຈົ້າກຳມະສິດກ່ຽວກັບຊັບທີ່ເປັນອະສັງຫາລິມະຊັບ:** **ກ** ເຊົ່າທີ່ດິນໜຶ່ງຕອນນຳ **ຂ** ກຳນົດເວລາຫ້າປີ, ປະຕິບັດສັນຍາໄດ້ສອງປີ **ຂ** ໄດ້ຂາຍສິດນຳໃຊ້ທີ່ດິນດັ່ງກ່າວໃຫ້ **ຄ** ແລະ ໄດ້ແຈ້ງບອກ **ຄ** ວ່າທີ່ດິນດັ່ງກ່າວ **ຂ** ຍັງນຳໃຊ້ຢູ່ຕາມສັນຍາເຊົ່າ ລະຫວ່າງ **ກ** ແລະ **ຂ** ໝາຍຄວາມວ່າ ຄ ມີສິດນຳໃຊ້ທີ່ດິນຕອນດັ່ງກ່າວຢ່າງຖືກຕ້ອງ ແລະ ປ່ຽນຈາກສັນຍາເຊົ່າ ລະຫວ່າງ **ກ** ແລະ **ຂ** (ໃນເບື້ອງຕົ້ນ) ເປັນ **ກ** ແລະ **ຄ**, **ກ** ສາມາດປະຕິບັດສັນຍາຈົນກວ່າໝົດອາຍຸຂອງສັນຍາເຊົ່າ ທີ່ໄດ້ຕົກລົງກັນ ແຕ່ປ່ຽນຈາກທີ່ **ກ** ເຄີຍປະຕິບັດຕໍ່ **ຂ** ມາປະຕິບັດ ຕໍ່ **ຄ** ເຈົ້າກຳມະສິດຜູ້ໃໝ່. **2. ກໍລະນີແຈ້ງການປ່ຽນເຈົ້າກຳມະສິດກ່ຽວກັບຊັບທີ່ເປັນສັງຫາລິມະຊັບ:** **ກ** ເຊົ່າລົດເກັງ ນຳບໍລິສັດ **ຂ** ເປັນເວລາ ສອງປີ ຊຶ່ງໄດ້ຈ່າຍເງິນຄ່າເຊົ່າເປັນສອງຄັ້ງ (ປີລະຄັ້ງ), **ກ** ໄດ້ຊຳລະຄັ້ງທີ 1 ໄປແລ້ວ ຍັງຄ້າງຈ່າຍຄ່າເຊົ່າຄັ້ງທີ 2, ປະຕິບັດສັນຍາໄປໄດ້ ໜຶ່ງປີ, **ຂ** ໄດ້ຂາຍກຳມະສິດລົດດັ່ງກ່າວ ໃຫ້ **ຄ** ແລະ ໄດ້ແຈ້ງບອກ **ຄ** ວ່າ ລົດດັ່ງກ່າວ ຍັງຢູ່ໃນການເຊົ່າ (ນຳໃຊ້) ຂອງ **ກ** ຕາມສັນຍາເຊົ່າລະຫວ່າງ **ກ** ແລະ **ຂ** ແລະ ຄ່າເຊົ່າຄັ້ງທີ 2 ແມ່ນມອບໃຫ້ **ຄ** ເລີຍ ເນື່ອງຈາກວ່າ **ຄ** ໄດ້ກຳມະສິດລົດນັ້ນແລ້ວ ໝາຍຄວາມວ່າ ສັນຍາຈາກ **ກ** ແລະ **ຂ** ຈະປ່ຽນເປັນ **ກ** ແລະ **ຄ** ຊຶ່ງ **ກ** ຕ້ອງໄດ້ປະຕິບັດຄ່າເຊົ່າງວດທີ 2 ກັບ **ຄ**.

	3. ກໍລະນີບໍ່ໄດ້ແຈ້ງ: ວັນທີ 1/1/2021 **ກ** ເຮັດສັນຍາເຊົ່າເຮືອນນຳ **ຂ** ກຳນົດເວລາ ສອງປີ, ວັນທີ 1/1/2022 **ຂ** ໄດ້ຂາຍສິດນຳໃຊ້ເຮືອນດັ່ງກ່າວ ໃຫ້ **ຄ**, **ຂ** ມີພັນທະຕ້ອງແຈ້ງ ໃຫ້ **ຄ** ຊາບວ່າ ເຮືອນດັ່ງກ່າວຍັງຢູ່ໃນການເຊົ່າຂອງ **ກ**, ແຕ່ກົງກັນຂ້າມ **ຂ** ບໍ່ໄດ້ ແຈ້ງໃຫ້ **ຄ** ຊາບ, ຕໍ່ມາ **ຄ** ມາທວງໃຫ້ **ກ** ອອກຈາກເຮືອນດັ່ງກ່າວ **ກ** ຈຶ່ງແຈ້ງ ວ່າຕົນເອງຍັງມີສິດເຊົ່າອີກ ໜຶ່ງປີ ຈົນກວ່າກຳນົດສັນຍາເຊົ່າຈະໝົດ, ກໍລະນີ ນີ້ **ຄ** ສາມາດຍົກເລີກສັນຍາຊື້-ຂາຍສິດນຳໃຊ້ເຮືອນກັບ **ຂ** ໄດ້ ຍ້ອນວ່າ **ຂ** ບໍ່ ປະຕິບັດພັນທະແຈ້ງໃຫ້ **ຄ** ຊາບ ແລະ ຖ້າຫາກ ມີຄວາມເສຍຫາຍເກີດຂຶ້ນ **ຂ** ຕ້ອງຮັບຜິດຊອບຕໍ່ຄວາມເສຍຫາຍດັ່ງກ່າວນັ້ນ. ເຖິງແນວໃດກໍຕາມ **ກ** ຍັງມີ ສິດນຳໃຊ້ເຮືອນ ຈົນກວ່າຈະໝົດກຳນົດສັນຍາເຊົ່າ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 63 ການປ່ຽນເຈົ້າກຳມະສິດ ໃນຊັບສິ່ງຂອງທີ່ ເຊົ່າ ຂອງກົດໝາຍວ່າດ້ວຍ ຂໍ້ຜູກພັນໃນ ແລະ ນອກສັນຍາປີ 2008, ໂດຍໄດ້ ປັບປຸງ ຄຳສັບວ່າ "**ຊັບສິ່ງຂອງ**" ມາເປັນ "**ຊັບ**" ເພື່ອໃຫ້ສອດຄ່ອງກັບນິຍາມ ຂອງຄຳວ່າ "**ຊັບ**" ຕາມທີ່ກຳນົດໄວ້ໃນມາດຕາ 227 ຂອງປະມວນກົດໝາຍ ແພ່ງ.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງຂອງປະເທດອື່ນ	ມາດຕາ 605, 605/2 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ; ມາດຕາ 496 ວັກ 4 ຂອງປະມວນກົດໝາຍແພ່ງຫວຽດນາມ (ກຳນົດກ່ຽວກັບ ຊັບເຄື່ອນທີ່); ມາດຕາ 566 ຂອງປະມວນກົດໝາຍເຢຍລະມັນ (ກຳນົດກ່ຽວກັບອາຄານ); ມາດຕາ 1743 ຂອງປະມວນກົດໝາຍແພ່ງຝຣັ່ງ; ມາດຕາ 569 ຂອງປະມວນກົດໝາຍແພ່ງ ແລະ ພານິດໄທ.
ມາດຕາອ້າງອີງ	ມາດຕາ 292, 293, 296, 316 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 438 ການໃຫ້ເຊົ່າຕໍ່

ຜູ້ເຊົ່າ ສາມາດເອົາຊັບທີ່ເຊົ່າ ໃຫ້ບຸກຄົນອື່ນເຊົ່າຕໍ່ໄດ້ ດ້ວຍຄວາມເຫັນດີຂອງຜູ້ໃຫ້ເຊົ່າ, ແຕ່ການ ໃຫ້ເຊົ່າຕໍ່ຕ້ອງຢູ່ໃນຂອບເຂດຂອງກຳນົດເວລາ ແລະ ເງື່ອນໄຂຂອງສັນຍາເຊົ່າເບື້ອງຕົ້ນ. ຖ້າຫາກບໍ່ໄດ້ຮັບ ການເຫັນດີຈາກຜູ້ໃຫ້ເຊົ່າ, ຜູ້ໃຫ້ເຊົ່າສາມາດຍົກເລີກສັນຍາເຊົ່າໃນເບື້ອງຕົ້ນໄດ້.

ຈຸດປະສົງ	ເພື່ອກຳນົດ ໃຫ້ຮູ້ກ່ຽວກັບ ຂອບເຂດສິດຂອງຜູ້ໃຫ້ເຊົ່າ ແລະ ຜູ້ເຊົ່າໃນການ ເຊົ່າຕໍ່.
ຕົວຢ່າງ	**1. ກ** ເຊົ່າທີ່ດິນສວນໝົ່ງຕອນນຳ **ຂ**, ຄ່າເຊົ່າ 5.000.000 ກີບ ຕໍ່ປີ, ກຳນົດ ເວລາ ຫ້າປີ, ປະຕິບັດສັນຍາ ໄດ້ ສາມປີ **ກ** ໄດ້ຕົກລົງເອົາທີ່ດິນຕອນດັ່ງ ກ່າວ ໃຫ້ **ຄ** ເຊົ່າຕໍ່ ພາຍໃນກຳນົດເວລາ ສອງປີ, ຄ່າເຊົ່າ 7.000.000 ກີບ ຕໍ່ປີ, **ກ** ສາມາດເຮັດໄດ້ ເນື່ອງຈາກວ່າ **ກ** ໄດ້ຂໍອະນຸຍາດ **ຂ** ແລະ **ຂ** ກໍໄດ້ ເຫັນດີ ສະນັ້ນ ສັນຍາເຊົ່າຕໍ່ ສາມາດຈັດຕັ້ງປະຕິບັດໄດ້. **2. ກ** ເຊົ່າທີ່ດິນສວນໝົ່ງຕອນນຳ **ຂ**, ຄ່າເຊົ່າ 5.000.000 ກີບ ຕໍ່ ປີ, ກຳນົດເວລາ ຫ້າປີ, ປະຕິບັດສັນຍາ ໄດ້ ສາມປີ **ກ** ໄດ້ຕົກລົງເອົາ ທີ່ດິນຕອນດັ່ງກ່າວ ໃຫ້ **ຄ** ເຊົ່າຕໍ່ ພາຍໃນກຳນົດເວລາ ສອງປີ, ຄ່າເຊົ່າ

	7.000.000 ກີບ ຕໍ່ປີ, ໂດຍບໍ່ໄດ້ຂໍອະນຸຍາດຈາກ **ຂ**, ເມື່ອ **ຂ** ຮູ້ຂ່າວ, **ຂ** ຈຶ່ງຍົກເລີກສັນຍາກັບ **ກ**, ເມື່ອສັນຍາລະຫວ່າງ **ກ** ແລະ **ຂ** ຖືກຍົກເລີກ ສັນຍາລະຫວ່າງ **ກ** ແລະ **ຄ** ກໍຈະເປັນໂມຄະ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກມາດຕາ 64 ການໃຫ້ເຊົ່າຕໍ່ ຂອງກົດໝາຍວ່າດ້ວຍ ຂໍ້ຜູກພັນໃນ ແລະ ນອກສັນຍາປີ 2008 ໂດຍໄດ້ປັບປຸງ ຄຳສັບວ່າ "**ຊັບສິ່ງຂອງ**" ມາເປັນ "**ຊັບ**" ເພື່ອໃຫ້ສອດຄ່ອງກັບນິຍາມ ຂອງຄຳວ່າ "**ຊັບ**" ຕາມທີ່ກຳນົດໄວ້ໃນມາດຕາ 227 ຂອງປະມວນກົດໝາຍແພ່ງ ແລະ ໄດ້ຕື່ມຂໍ້ຄວາມສຳຄັນ ກ່ຽວກັບ ກໍລະນີ ທີ່ຜູ້ໃຫ້ເຊົ່າ ຫາກບໍ່ເຫັນດີທີ່ຈະໃຫ້ຄົນອື່ນເຊົ່າຕໍ່ ກໍ່ບໍ່ສາມາດ ເຮັດໄດ້ ເພື່ອໃຫ້ຈະແຈ້ງ ແລະ ຊັດເຈນຂຶ້ນຕື່ມ.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງຂອງປະເທດອື່ນ	ມາດຕາ 612 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ; ມາດຕາ 475 ຂອງປະມວນກົດໝາຍແພ່ງຫວຽດນາມ.
ມາດຕາອ້າງອີງ	ມາດຕາ 378, 379, 380, 395, 434, 435, 436, ແລະ 437 ຂອງ ປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ຕ. ສັນຍາສຳປະທານ

ມາດຕາ 439 ສັນຍາສຳປະທານ

ສັນຍາສຳປະທານ ແມ່ນ ການຕົກລົງລະຫວ່າງລັດ ກັບນິຕິບຸກຄົນ ກ່ຽວກັບການໃຫ້ສິດໃນການ ດຳເນີນທຸລະກິດ ຫຼື ການພັດທະນາໂຄງການໃດໜຶ່ງ ພາຍໃຕ້ກົດໝາຍຂອງ ສປປ ລາວ ແລະ ພາຍໃຕ້ ບັນດາເງື່ອນໄຂສະເພາະຕາມສັນຍາ.

ສັນຍາສຳປະທານ ຕ້ອງເຮັດເປັນລາຍລັກອັກສອນ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ກ່ຽວກັບ ຄວາມໝາຍ ແລະ ຮູບການຂອງການເຮັດສັນຍາສຳ ປະທານ.
ຕົວຢ່າງ	**1.** ລັດຖະບານ ຕົກລົງອະນຸມັດໃຫ້ ບໍລິສັດ **ກ** ສຳປະທານທີ່ດິນຂອງລັດ ຈຳນວນ 100 ເຮັກຕາ ພາຍໃນລະຍະເວລາ ຫ້າສິບປີ ເພື່ອພັດທະນາ ແລະ ດຳເນີນທຸລະກິດໃດໜຶ່ງ ເຊັ່ນ ປູກຢາງພາລາ ຊຶ່ງບໍລິສັດ **ກ** ຕ້ອງປະຕິບັດສິດ ແລະ ພັນທະຕາມທີ່ກຳນົດໃນສັນຍາ ແລະ ກົດໝາຍສະເພາະ ເພື່ອຢັ້ງຢືນ ການຕົກລົງດັ່ງກ່າວ ໄດ້ມີພິທີເຊັນສັນຍາສຳປະທານລະຫວ່າງ ລັດຖະບານ ແລະ ບໍລິສັດ **ກ**. **2.** ລັດຖະບານຕົກລົງອະນຸມັດໃຫ້ ບໍລິສັດ **ກ** ສຳປະທານທີ່ດິນ ຈຳນວນ 50 ເຮັກຕາ ພາຍໃນກຳນົດເວລາ ຫ້າສິບປີ ເພື່ອສ້າງເປັນສວນສາທະລະນະ ແລະ ສູນການຄ້າສາກົນ, ບໍລິສັດ **ກ** ຕ້ອງປະຕິບັດສິດ ແລະ ພັນທະຕາມທີ່ ໄດ້ກຳນົດໄວ້ໃວ້ໃນສັນຍາ ແລະ ກົດໝາຍສະເພາະ ເພື່ອຢັ້ງຢືນການຕົກລົງ ດັ່ງກ່າວ ໄດ້ມີພິທີເຊັນສັນຍາສຳປະທານ ລະຫວ່າງ ລັດຖະບານ ແລະ ບໍລິສັດ **ກ**.
ເຫດຜົນໃນການກຳນົດ	ມາດຕານີ້ປັບປຸງມາຈາກ ມາດຕາ 3 ຂໍ້ 8 ຂອງກົດໝາຍວ່າດ້ວຍ ການສົ່ງເສີມ ການລົງທຶນ ປີ 2016 ໂດຍໄດ້ຕື່ມວັກທີ ສອງ ກ່ຽວກັບ ສັນຍາສຳປະທານ ຕ້ອງ ເຮັດເປັນລາຍລັກສອນໃສ່ຕື່ມ ແລະ ໄດ້ນຳມາກຳນົດໄວ້ໃນປະມວນກົດໝາຍ ແພ່ງ ເພື່ອເຫັນແຈ້ງว่า ສັນຍາສຳປະທານ ແມ່ນສັນຍາປະເພດໜຶ່ງ ຊຶ່ງມີຄວາມ ສຳຄັນ.

ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 3 (ຂໍ້8), 41 ຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ; ມາດຕາ 378, 379, 440 ຂອງປະມວນກົດໝາຍແພ່ງ; ມາດຕາ 118-120 ຂອງກົດໝາຍວ່າດ້ວຍທີ່ດິນ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 440 ສິດ ແລະ ພັນທະຂອງຄູ່ສັນຍາ

ຄູ່ສັນຍາສຳປະທານ ສາມາດກຳນົດ ສິດ ແລະ ພັນທະຂອງຕົນ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງຂອງ ສປປ ລາວ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ກ່ຽວກັບ ສິດ ແລະ ພັນທະຂອງຄູ່ສັນຍາສຳປະທານ ແມ່ນມີກົດໝາຍສະເພາະກຳນົດໄວ້ ແລະ ຕ້ອງໄດ້ປະຕິບັດຕາມຂໍ້ກຳນົດດັ່ງກ່າວ.
ຕົວຢ່າງ	ລັດຖະບານ ຕົກລົງອະນຸມັດໃຫ້ ບໍລິສັດ **ກ** ສຳປະທານທີ່ດິນ ຈຳນວນ 50 ເຮັກຕາ, ໃນນັ້ນລັດຖະບານມີພັນທະໃນການອະນຸຍາດສິດໃຊ້ທີ່ດິນ ໃນລະຍະເວລາ ສາມສິບປີ ເພື່ອສ້າງເປັນສູນການຄ້າ, ບໍລິສັດ **ກ** ມີພັນທະປະຕິບັດຕາມຂໍ້ກຳນົດ ແລະ ເງື່ອນໄຂທີ່ທາງພາກສ່ວນກ່ຽວຂ້ອງອະນຸຍາດ ແລະ ມີສິດນຳໃຊ້ທີ່ດິນທີ່ໄດ້ສຳປະທານ. ສ່ວນລັດຖະບານມີສິດຈະໄດ້ຮັບຄ່າສຳປະທານ ຈາກບໍລິສັດ **ກ** ຈຳນວນ 10.000ໂດລາສະຫະລັດ/ປີ (ຕາມທີ່ໄດ້ຕົກລົງກັນໄວ້ໃນສັນຍາ). ນອກຈາກສິດ ແລະ ພັນທະດັ່ງກ່າວແລ້ວ ຄູ່ສັນຍາສາມາດຕົກລົງກັນໄດ້ອີກ ແຕ່ຕ້ອງໃຫ້ສອດຄ່ອງກັບລະບຽບການທີ່ກ່ຽວຂ້ອງ. ເພື່ອຢັ້ງຢືນການຕົກລົງດັ່ງກ່າວ ໄດ້ມີພິທີເຊັນສັນຍາສຳປະທານລະຫວ່າງ ລັດຖະບານ ແລະ ບໍລິສັດ **ກ**.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງຂຶ້ນໃໝ່ ເພື່ອກຳນົດກ່ຽວກັບ ສິດ ແລະ ພັນທະຂອງຄູ່ສັນຍາ ຊຶ່ງເປັນບັນຫາພື້ນຖານທາງແພ່ງ ສ່ວນວ່າ ສິດ ແລະ ພັນທະກ່ຽວກັບການສຳປະທານ ແຕ່ລະປະເພດ ແມ່ນມີກົດໝາຍສະເພາະ ແລະ ລະບຽບການຄຸ້ມຄອງໄວ້.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 67 74 ຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ; ມາດຕາ 121 ແລະ 122 ຂອງກົດໝາຍວ່າດ້ວຍທີ່ດິນ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ຖ. ສັນຍາຝາກຊັບສິ່ງຂອງ

ມາດຕາ 441 ສັນຍາຝາກຊັບສິ່ງຂອງ

ສັນຍາຝາກຊັບສິ່ງຂອງ ແມ່ນ ການຕົກລົງຂອງຄູ່ສັນຍາ, ຊຶ່ງຜູ້ຝາກໄດ້ມອບຊັບໃຫ້ຜູ້ຮັບຝາກເພື່ອປົກປັກຮັກສາ ແລະ ຜູ້ຮັບຝາກຕ້ອງສົ່ງຊັບສິ່ງຂອງດັ່ງກ່າວຄືນໃນສະພາບເດີມ ໃຫ້ຜູ້ຝາກ ເມື່ອຜູ້ກ່ຽວຫາກທວງຖາມເອົາ.

ໃນການຝາກຊັບສິ່ງຂອງນັ້ນ ອາດມີການຈ່າຍ ຫຼື ບໍ່ມີການຈ່າຍຄ່າຝາກກໍໄດ້ ແລ້ວແຕ່ຄູ່ສັນຍາຈະຕົກລົງກັນ ຫຼື ຕາມລະບຽບການທີ່ກ່ຽວຂ້ອງ.

ໃນກໍລະນີທີ່ການຝາກຊັບສິ່ງຂອງ ຫາກມີກຳນົດເວລາຜູ້ຮັບຝາກບໍ່ມີສິດຈະສົ່ງຊັບທີ່ຝາກນັ້ນຄືນ ກ່ອນກຳນົດເວລາໄດ້, ເວັ້ນເສຍແຕ່ໃນກໍລະນີທີ່ຈຳເປັນ ແຕ່ຜູ້ຝາກຈະເອົາຊັບສິ່ງຂອງທີ່ຝາກນັ້ນຄືນ ກ່ອນກຳນົດເວລາກໍໄດ້.

ຖ້າການຝາກຊັບສິ່ງຂອງນັ້ນ ຫາກບໍ່ມີກຳນົດເວລາຜູ້ຝາກຈະເອົາຊັບສິ່ງຂອງທີ່ຝາກນັ້ນຄືນ ໃນເວລາໃດກໍໄດ້ ແລະ ຜູ້ຮັບຝາກ ກໍມີສິດທວງໃຫ້ຜູ້ຝາກຮັບເອົາຊັບສິ່ງຂອງຂອງຕົນຄືນ ໃນເວລາອັນເໝາະສົມ.

ການຈ່າຍຄ່າຝາກຊັບສິ່ງຂອງນັ້ນ ຈະຄິດໄລ່ຕາມກຳນົດເວລາຝາກຕົວຈິງ, ເວັ້ນເສຍແຕ່ຫາກໄດ້ຕົກລົງກັນໄວ້ເປັນຢ່າງອື່ນໃນສັນຍາ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ກ່ຽວກັບ ຫຼັກການ ແລະ ເງື່ອນໄຂຂອງສັນຍາຝາກຊັບສິ່ງຂອງ. ນອກນັ້ນ ຍັງໄດ້ກຳນົດກ່ຽວການຈ່າຍຄ່າຝາກ ພ້ອມດ້ວຍວິທີຄິດໄລ່ຄ່າຝາກ ຖ້າຫາກມີການຕົກລົງກັນ ແລະ ການສົ່ງຊັບຄືນແກ່ຜູ້ ໃນກໍລະນີສັນຍາມີກຳນົດເວລາ ຫຼື ບໍ່ມີກຳນົດເວລາ.
ຕົວຢ່າງ	**ກໍລະນີມີກຳນົດເວລາ:** **1. ກ** ຖືກມອບໝາຍໃຫ້ໄປເຄື່ອນໄຫວວຽກຢູ່ຫ້ອງຖິ່ນ ເປັນເວລາ ຫ້າເດືອນ, **ກ** ຈຶ່ງໄດ້ຝາກລົດຈັກໄວ້ນຳ **ຂ** ພາຍໃນກຳນົດເວລາ ຫ້າເດືອນ, ເມື່ອຄົບກຳນົດເວລາ ກ ສາມາດໄປຮັບເອົາລົດຄັນດັ່ງກ່າວ ກັບ **ຂ** ໄດ້ ແລະ ລົດຕ້ອງຢູ່ໃນສະພາບປົກກະຕິ. **2.** ໃນວັນທີ 30 ມິຖຸນາ 2020 **ກ** ພັກຮຽນ ຈຶ່ງໄດ້ຝາກລົດຈັກໄວ້ນຳ ເຮືອນ **ຂ** ຊຶ່ງຕົກລົງຄ່າຝາກນຳກັນ ມື້ລະ 5.000 ກີບ, ເປັນເວລາ ສອງເດືອນ (ແຕ່ວັນທີ 30 ມິຖຸນາ - 30 ສິງຫາ 2020) ຄ່າຝາກຈຳນວນ 300.000 ກີບ. ມາຮອດວັນທີ 15 ສິງຫາ 2020 **ຂ** ມີຄວາມເປັນທີ່ຕ້ອງເດີນທາງໄປເຮັດວຽກຕ່າງປະເທດ ໃນກໍລະນີນີ້ **ຂ** ສາມາດທວງໃຫ້ **ກ** ມາຮັບເອົາເຄື່ອງຝາກກ່ອນກຳນົດເວລາໄດ້ເຊັ່ນດຽວກັນ, ຖ້າວ່າ **ກ** ຫາກກັບມາກ່ອນກຳນົດເວລາ **ກ** ສາມາດມາຮັບເອົາເຄື່ອງຝາກກ່ອນກຳນົດເວລາທີ່ໄດ້ຕົກລົງກັນ. **3.** ໃນວັນທີ 30 ມິຖຸນາ 2020 **ກ** ພັກຮຽນ ຈຶ່ງໄດ້ຝາກຄອມພິວເຕີນຳ **ຂ** ຈົນມາຮອດວັນທີ 1 ກັນຍາ 2020 ເປີດສົກຮຽນໃໝ່ **ກ** ກັບມາຮຽນຕໍ່ ຈຶ່ງມາເອົາຄອມພິວເຕີ ນຳ **ຂ**. ກໍລະນີ ທີ່ **ກ** ກັບມາຮຽນແລ້ວ ແຕ່ຍັງບໍ່ທັນມາເອົາຄອມນັ້ນ **ຂ** ສາມາດທວງໃຫ້ **ກ** ມາຮັບເອົາຄອມພິວເຕີນັ້ນໄດ້ເຊັ່ນກັນ. **4.** ໃນວັນທີ 30 ມິຖຸນາ 2020 **ກ** ພັກຮຽນ ຈຶ່ງໄດ້ຝາກລົດຈັກໄວ້ນຳ ເຮືອນ **ຂ** ຊຶ່ງຕົກລົງຄ່າຝາກນຳກັນ ມື້ລະ 5.000 ກີບ, ເປັນເວລາ 2 ເດືອນ (ແຕ່ວັນທີ 30 ມິຖຸນາ - 30 ສິງຫາ 2020) ຄ່າຝາກ ຕົກເປັນ 300.000 ກີບ ຊຶ່ງໃນສັນຍາກຳນົດຄັກແນ່ວ່າຖ້າ **ກ** ມາເອົາລົດກ່ອນເວລາທີ່ໄດ້ຕົກລົງກັນ ເງິນຄ່າຝາກຈະຍັງຈ່າຍ 300.000 ກີບ ເທົ່າເກົ່າ, ມາຮອດວັນທີ 20 ສິງຫາ 2020 **ກ** ກັບມາກ່ອນ ເຖິງວ່າ **ກ** ຈະມາເອົາກ່ອນວັນທີ 30 ສິງຫາ 2020 ກໍຕາມ ແຕ່ເງິນຄ່າຝາກກໍຍັງຕ້ອງຈ່າຍເທົ່າເກົ່າ 300.000 ກີບ. **ກໍລະນີບໍ່ມີກຳນົດເວລາ** **5.** ໃນວັນທີ 1 ມັງກອນ 2021 **ກ** ໄດ້ຝາກລົດເກັງນຳ **ຂ** ໃນຊ່ວງເວລາທີ່ຕົນໄປປະຈຳການຢູ່ຕ່າງປະເທດ ຄິດໄລ່ເດືອນລະ 100.000 ກີບ, ມາຮອດ

	ວັນທີ 1 ມີນາ 2021 **ກ** ໄດ້ກັບມາແຕ່ຕ່າງປະເທດແລ້ວ ແຕ່ **ກ** ຍັງບໍ່ທັນໄປ ທວງເອົາຊັບນຳ **ຂ** ເທື່ອ, ໃນວັນທີ 30 ມີຖຸນາ 2021 **ຂ** ຈຶ່ງຮູ້ວ່າ **ກ** ກັບ ມາແລ້ວ ແລະ ໄດ້ທວງໃຫ້ **ກ** ມາຮັບເອົາຊັບທີ່ຝາກນັ້ນ ພ້ອມທັງຈ່າຍຄ່າຝາກ ຈຳນວນ ຫົກເດືອນ ແຕ່ເດືອນ ມັງກອນ - ມິຖຸນາ 2019 ຈຳນວນ 600.000 ກີບ.
ເຫດຜົນໃນການກຳນົດ	ມາດຕານີ້ປັບປຸງມາຈາກ ມາດຕາ 65 ສັນຍາຝາກຊັບສິ່ງຂອງ ຂອງກົດໝາຍວ່າ ດ້ວຍຂໍ້ຜູກພັນໃນ ແລະ ນອກສັນຍາປີ 2008, ໂດຍໄດ້ປັບປຸງຄຳສັບ "**ຈາກ ລະບຽບການສະເພາະ**" ມາເປັນ "**ລະບຽບການທີ່ກ່ຽວຂ້ອງ**" ເພື່ອໃຫ້ ສອດຄ່ອງກັບນິຕິກຳອື່ນໆ.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງຂອງປະເທດອື່ນ	ມາດຕາ 657 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 442, 443, 444 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 442 ສິດ ແລະ ພັນທະຂອງຜູ້ຮັບຝາກ

ຜູ້ຮັບຝາກ ມີສິດ ດັ່ງນີ້:

1. ທວງເອົາຄ່າຝາກ ຖ້າຫາກມີການຕົກລົງ;
2. ທວງເອົາຄ່າໃຊ້ຈ່າຍເຂົ້າໃນການປົກປັກຮັກສາ, ຖ້າຜູ້ຝາກ ຫາກຊັກຊ້າໃນການມາຮັບເອົາ ຊັບສິ່ງຂອງ ທີ່ຝາກຄືນ.

ຜູ້ຮັບຝາກ ມີພັນທະ ດັ່ງນີ້:

1. ປົກປັກຮັກສາບໍ່ໃຫ້ຊັບທີ່ຝາກນັ້ນຖືກເສຍຫາຍ, ເປ່ເພ ຫຼື ເສຍຄຸນນະພາບ;
2. ສົ່ງຊັບທີ່ຝາກນັ້ນຄືນໃຫ້ແກ່ຜູ້ຝາກໃນສະພາບເດີມ;
3. ເມື່ອຊັບທີ່ຝາກ ຫາກມີການເສຍຫາຍ, ເປ່ເພ ຫຼື ເສຍຄຸນນະພາບແລ້ວ ຜູ້ຮັບຝາກຕ້ອງຮັບ ຜິດຊອບຕໍ່ການເສຍຫາຍດັ່ງກ່າວ, ເວັ້ນເສຍແຕ່ການເສຍຫາຍນັ້ນຫາກເກີດຂຶ້ນຍ້ອນເຫດສຸດວິໄສເທົ່ານັ້ນ;
4. ໃນກໍລະນີທີ່ມີເຫດການ ຫຼື ສະພາບການໃດໜຶ່ງ ທີ່ຈະກໍ່ຄວາມເສຍຫາຍແກ່ຊັບທີ່ຝາກນັ້ນ ,ຜູ້ ຮັບຝາກຕ້ອງແຈ້ງໃຫ້ຜູ້ຝາກຊາບໃນທັນທີ. ຖ້າຜູ້ຮັບຝາກ ຫາກບໍ່ແຈ້ງແລ້ວ ຜູ້ກ່ຽວກໍຈະຮັບຜິດຊອບຕໍ່ຄວາມ ເສຍຫາຍທີ່ເກີດຂຶ້ນ.

ຜູ້ຮັບຝາກ ບໍ່ມີສິດນຳໃຊ້ຊັບທີ່ຝາກນັ້ນ ຫຼື ມອບຊັບສິ່ງຂອງດັ່ງກ່າວ ໃຫ້ຜູ້ອື່ນປົກປັກຮັກສາແທນ, ເວັ້ນເສຍແຕ່ໄດ້ຮັບອະນຸຍາດຈາກຜູ້ຝາກເທົ່ານັ້ນ. ຖ້າຊັບສິ່ງຂອງທີ່ຝາກຫາກເກີດໝາກຜົນຢ່າງໃດໜຶ່ງຂຶ້ນ ໝາກຜົນທີ່ເກີດນັ້ນກໍຈະຕົກເປັນຂອງຜູ້ຝາກ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ກ່ຽວກັບ ສິດ ແລະ ພັນທະຂອງຜູ້ຮັບຝາກ
ຕົວຢ່າງ	**ກ** ຕົກລົງຝາກລົດຈັກນຳ **ຂ** ເປັນເວລາ 5 ວັນ, ວັນລະ 15.000 ກີບ, **ຂ** ມີ ພັນທະ ປົກປັກຮັກສາລົດຈັກຄັນດັ່ງກ່າວ ຈົນກວ່າ **ກ** ຈະມາຮັບເອົາຄືນ ແລະ ມີສິດໄດ້ຮັບເງິນຄ່າຝາກຈາກ **ກ** ຕາມການຕົກລົງກັນ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 66 ພັນທະຂອງຜູ້ຮັບຝາກ ຂອງກົດໝາຍ ວ່າດ້ວຍຂໍ້ຜູກພັນໃນ ແລະ ນອກສັນຍາ ປີ 2008, ໂດຍໄດ້ແຍກ ສິດ ແລະ ພັນທະຂອງ ຜູ້ຮັບຝາກ ເພື່ອເຮັດໃຫ້ ຜູ້ອ່ານ, ຜູ້ຄົ້ນຄວ້າ, ຜູ້ນຳໃຊ້ກົດໝາຍ ເຂົ້າໃຈງ່າຍ ແລະ ຈະແຈ້ງຕື່ມ.

ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 658, 659 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 441, 443 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 443 ສິດ ແລະ ພັນທະຂອງຜູ້ຝາກ

ຜູ້ຝາກ ມີສິດ ດັ່ງນີ້:

1. ທວງເອົາຊັບສິ່ງຂອງ ທີ່ຝາກຄືນໄດ້ ທຸກເວລາ;
2. ທວງເອົາການໃຊ້ແທນຄ່າເສຍຫາຍ ຖ້າຜູ້ຮັບຝາກຫາກເຮັດໃຫ້ຊັບສິ່ງຂອງທີ່ຝາກນັ້ນ ຖືກເສຍຫາຍ, ເປເພ່ ຫຼື ເສຍຄຸນນະພາບ.

ຜູ້ຝາກ ມີພັນທະ ດັ່ງນີ້:

1. ແຈ້ງຈຸດບົກພ່ອງ ຫຼື ຈຸດພິເສດຂອງຊັບສິ່ງຂອງ ທີ່ຝາກນັ້ນ ໃຫ້ຜູ້ຮັບຝາກຊາບ ແລ້ວຄູ່ສັນຍາທັງສອງຝ່າຍ ຈຶ່ງພ້ອມກັນກວດກາເບິ່ງສະພາບຕົວຈິງຂອງຊັບສິ່ງຂອງນັ້ນ. ຖ້າຜູ້ຝາກ ຫາກບໍ່ໄດ້ແຈ້ງຈຸດບົກ ພ່ອງ ຫຼື ຈຸດພິເສດຂອງຊັບສິ່ງຂອງນັ້ນໃຫ້ຜູ້ຮັບຝາກຊາບ, ຊຶ່ງພາໃຫ້ມີການເສຍຫາຍແກ່ຜູ້ຮັບຝາກ ຫຼື ຊັບທີ່ຝາກນັ້ນແລ້ວ, ຜູ້ຝາກ ຕ້ອງຮັບຜິດຊອບຕໍ່ການເສຍຫາຍທີ່ເກີດຂຶ້ນ;
2. ຮັບເອົາຊັບສິ່ງຂອງຕາມກຳນົດເວລາ ແລະ ຈ່າຍຄ່າຝາກ ຖ້າຫາກມີການຕົກລົງກັນ;
3. ຖ້າຄູ່ສັນຍາ ຫາກໄດ້ຕົກລົງຈ່າຍຄ່າຝາກນັບແຕ່ເວລາໄດ້ຕົກລົງກັນເປັນຕົ້ນໄປ, ການຊັກຊ້າໃນການມອບຊັບທີ່ຝາກນັ້ນ ກໍຈະຕົກເປັນຄວາມຮັບຜິດຊອບຂອງຜູ້ຝາກເອງ;
4. ໃນກໍລະນີທີ່ຜູ້ຝາກຫາກຊັກຊ້າໃນການຮັບເອົາຊັບນັ້ນຄືນ ຜູ້ກ່ຽວຕ້ອງຮັບຜິດຊອບຈ່າຍຄ່າຝາກຕາມຈຳນວນວັນຊັກຊ້ານັ້ນຕື່ມອີກ;
5. ທົດແທນຄ່າໃຊ້ຈ່າຍໃນການປົກປັກຮັກສາ ຄືນແກ່ຜູ້ຮັບຝາກ ທີ່ໄດ້ຈ່າຍກ່ອນແລ້ວ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ກ່ຽວກັບ ສິດ ແລະ ພັນທະຂອງຜູ້ຝາກ
ຕົວຢ່າງ	**1. ກ** ຕົກລົງຝາກລົດຈັກນຳ **ຂ,** ຄ່າຝາກວັນລະ 100.000 ກີບ, **ກ** ມີພັນທະ ຕ້ອງຈ່າຍຄ່າຝາກຈຳນວນດັ່ງກ່າວໃຫ້ **ຂ** ຕາມການຕົກລົງກັນ ແລະ **ກ** ຍັງມີສິດທວງຖາມເອົາລົດຂອງຕົນໄດ້ທຸກເວລາ ຖ້າລົດມີການເປ່ເພເສຍຫາຍ ກໍມີສິດທວງໃຫ້ **ຂ** ຮັບຜິດຊອບຕໍ່ຄ່າເສຍຫາຍດັ່ງກ່າວນັ້ນ. (ວັກໜຶ່ງ) **2. ກ** ຕົກລົງຝາກລົດໃຫຍ່ໄວ້ນຳ **ຂ**, ໂດຍ **ກ** ໄດ້ແຈ້ງ **ຂ** ວ່າ ລົດຄັນດັ່ງກ່າວ ຕ້ອງໄດ້ມີການຕິດຈັກ ຫຼື ອຸ່ນຈັກ ທຸກມື້ ເພື່ອເຮັດໃຫ້ເຄື່ອງຈັກມັນສາມາດ ນຳໃຊ້ໄດ້ດີ. ຖ້າບໍ່ອຸ່ນຈັກແຕ່ລະມື້ ຈະເຮັດໃຫ້ເຄື່ອງຈັກມີບັນຫາ ແລະ ເຮັດໃຫ້ລະບົບໄຟສັນຍາ ແລະ ແອເສຍນຳ ກໍລະນີນີ້ **ກ** ໄດ້ແຈ້ງຈຸດພິເສດ ຂອງລົດແລ້ວ ຖ້າເກີດຄວາມເສຍຫາຍຍ້ອນເຫດຜົນດັ່ງກ່າວ **ຂ** ຕ້ອງ ຮັບຜິດຊອບ. ຖ້າກໍລະນີທີ່ **ກ** ບໍ່ໄດ້ແຈ້ງ ເຮັດໃຫ້ລົດມີຄວາມເສຍຫາຍ ແມ່ນ **ກ** ຕ້ອງຮັບຜິດຊອບເອງ. (ຂໍ້ 1 ວັກສອງ) **3. ກ** ມີແຜນຈະໄປເຮັດວຽກຢູ່ຕ່າງປະເທດ ສາມເດືອນ ຈຶ່ງໄດ້ເຮັດສັນຍາ ຝາກລົດໃຫຍ່ນຳ **ຂ** ໄວ້ ຊຶ່ງຕົກລົງຄ່າຝາກ ເດືອນລະ 500.000 ກີບ ລວມຄ່າຝາກທັງໝົດເປັນ 1.500.000 ກີບ ຊຶ່ງຈະເລີ່ມເອົາລົດໄປຝາກ ນຳ **ຂ** ແຕ່ວັນທີ 1 ກັນຍາ 2020 ໄປຮອດວັນທີ 31 ພະຈິກ 2020. ເມື່ອ ຮອດກຳນົດເວລາ **ກ** ໄດ້ມາເອົາລົດຄືນ ແລະ ໄດ້ຈ່າຍຄ່າຝາກໃຫ້ **ຂ** ຕາມ ທີ່ໄດ້ຕົກລົງໃນສັນຍາ. (ຂໍ້ 2 ວັກສອງ)

	4. ກ ຈະໄປທ່ຽວຕ່າງປະເທດ ຈຶ່ງຕົກລົງຝາກ ຄອມພິວເຕີໄວ້ນຳ **ຂ** ເປັນເວລາ 30 ວັນ, ວັນລະ 10.000 ກີບ ລວມເປັນເງິນ 300.000 ກີບ ນັບແຕ່ວັນທີ 1-31 ມັງກອນ 2021, ພາຍຫຼັງຕົກລົງກັນກ່ຽວກັບວັນເວລາ ແລະ ຄ່າຝາກແລ້ວ ແຕ່ໃນໂຕຈິງ ວັນທີ 15 ມັງກອນ 2021 ກ ຈຶ່ງເອົາ ຄອມພິວເຕີມມາມອບໃຫ້ **ຂ**. ເຖິງວ່າ **ກ** ຈະໄດ້ມອບຊັບໃຫ້ **ຂ** ຊ້າກວ່າ ເວລາທີ່ໄດ້ຕົກລົງກັນກໍ່ຕາມ ແຕ່ **ກ** ກໍຕ້ອງຈ່າຍຄ່າຝາກໃຫ້ **ຂ** ຄົບ ຕາມ ຈຳນວນ 300.000 ກີບ ທີ່ໄດ້ຕົກລົງກັນໄວ້. (ຕາມຂໍ້ 3 ວັກສອງ) **5. ກ** ຈະໄປທ່ຽວຕ່າງປະເທດ ຈຶ່ງຕົກລົງຝາກ ຄອມພິວເຕີໄວ້ ນຳ **ຂ** ເປັນ ເວລາ 30 ວັນ, ວັນລະ 20.000 ກີບ ລວມເປັນເງິນ 600.000 ກີບ ນັບ ແຕ່ວັນທີ 1-31 ມັງກອນ 2021, ເມື່ອຮອດວັນທີ 31 ມັງກອນ 2021 ແລ້ວ **ກ** ຍັງບໍ່ມາຮັບເອົາ ຄອມພິວເຕີ, ຈົນຮອດວັນທີ 15 ກຸມພາ 2020 **ກ** ຈຶ່ງມາເອົາຄອມພິວເຕີ, ກໍລະນີນີ້ **ກ** ຕ້ອງຈ່າຍຄ່າຝາກຄອມພິວເຕີ ຊ່ວງ ທີ່ກາຍກຳນົດ ເພີ່ມໃຫ້ **ຂ** ອີກ 15 ວັນ ໃນຈຳນວນເງິນ 300.000 ກີບ. (ຂໍ້ 4 ວັກສອງ) **6. ກ** ມີແຜນຈະໄປເຮັດວຽກຢູ່ຕ່າງປະເທດ ສາມເດືອນ ຈຶ່ງໄດ້ເຮັດສັນຍາ ຝາກລົດໃຫຍ່ນຳ **ຂ** ໄວ້ ຊຶ່ງຕົກລົງຄ່າຝາກ ເດືອນລະ 500.000 ກີບ ລວມຄ່າຝາກທັງໝົດເປັນ 1.500.000 ກີບ ຊຶ່ງຈະເລີ່ມເອົາລົດໄປຝາກ ນຳ **ຂ** ແຕ່ວັນທີ 1 ກັນຍາ 2020 ໄປຮອດວັນທີ 31 ພະຈິກ 2020, ໃນໄລຍະທີ ລົດຢູ່ນຳ **ຂ** ນັ້ນ ຖັງນ້ຳມັນລົດຮົ່ວ **ຂ** ຈຶ່ງໄດ້ຈ້າງຊ່າງມາປ່ຽນ ຖັງນ້ຳມັນລົດນັ້ນ ເປັນຈຳນວນເງິນ 1.000.000 ກີບ. ສະນັ້ນ ເມື່ອຮອດ ກຳນົດເວລາ **ກ** ຕ້ອງຈ່າຍຄ່າຝາກ ແລະ ຄ່າປົກປັກຮັກສາລົດຄັນດັ່ງກ່າວ ລວມເປັນເງິນ 2.500.000 ກີບ (ຂໍ້ 5 ວັກສອງ)
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 67 ພັນທະຂອງຜູ້ຝາກ ຂອງກົດໝາຍວ່າ ດ້ວຍຂໍ້ຜູກພັນໃນ ແລະ ນອກສັນຍາ ປີ 2008; ແຕ່ໄດ້ແຍກລຳດັບ ສິດ ແລະ ພັນທະຂອງ ຜູ້ຮັບຝາກ ເພື່ອເຮັດໃຫ້ ຜູ້ອ່ານ, ຜູ້ຄົ້ນຄວ້າ, ຜູ້ນຳໃຊ້ກົດໝາຍ ເຂົ້າໃຈງ່າຍ ແລະ ຈະແຈ້ງຕື່ມ.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງຂອງປະເທດອື່ນ	ມາດຕາ 661, 662 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 333, 393, 471, 479 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 444 ການຝາກຊັບສິ່ງຂອງທີ່ອາດປ່ຽນຮູບ ຫຼື ເສຍຄຸນນະພາບໄວ

ຊັບສິ່ງຂອງທີ່ຝາກນັ້ນ ອາດປ່ຽນຮູບ ຫຼື ເສຍຄຸນນະພາບໄວ ແລະ ຜູ້ຝາກບໍ່ມາຮັບເອົາຕາມກຳ ນົດເວລາແລ້ວ, ຜູ້ຮັບຝາກມີສິດຂາຍຊັບດັ່ງກ່າວ ແລະ ຫັກເອົາເງິນຄ່າຝາກ ລວມທັງຄ່າໃຊ້ຈ່າຍໃນການ ຂາຍ ຖ້າຫາກມີ, ສ່ວນເງິນທີ່ຍັງເຫຼືອນັ້ນ ຕ້ອງສົ່ງຄືນໃຫ້ແກ່ຜູ້ຝາກ.

ໃນກໍລະນີທີ່ຜູ້ຮັບຝາກ ຫາກຂາຍຊັບທີ່ຝາກນັ້ນ ດ້ວຍຄວາມບໍ່ບໍລິສຸດໃຈແລ້ວ ຜູ້ກ່ຽວກໍຈະມີ ຄວາມຮັບຜິດຊອບທາງອາຍາ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ກ່ຽວກັບ ສິດ ແລະ ພັນທະຂອງຄູ່ສັນຍາ ຕໍ່ເປົ້າໝາຍຂອງ ສັນຍາຝາກຊັບສິ່ງຂອງ ທີ່ອາດປ່ຽນຮູບ ຫຼື ເສຍຄຸນນະພາບໄວ.

ຕົວຢ່າງ	**1.** **ກ** ໂຮງງານຜະລິດເຂົ້າຈີ່ ໄດ້ຝາກເຂົ້າຈີ່ ຈຳນວນ 100 ກ້ອນ ໄວ້ນຳ ຮ້ານຂາຍເຄື່ອງ ຂອງ **ກ** ຊ່ວຍຂາຍກ້ອນລະ 10.000 ກີບ ພາຍໃນ 2 ວັນ ໂດຍໄດ້ຕົກລົງຄ່າຝາກຂາຍ ຈຳນວນ 100.000 ກີບ, ເມື່ອຮອດກຳນົດ **ກ** ບໍ່ມາຮັບເອົາເຂົ້າຈີ່ ຊຶ່ງ **ຂ** ເຫັນວ່າເຂົ້າຈີ່ ມັນຈະບຸດ ຈຶ່ງໄດ້ຂາຍເລອອກ ກ້ອນລະ 7.000 ກີບ, ໄດ້ເງິນທັງໝົດຈາກການຂາຍ 700.000 ກີບ **ຂ** ໄດ້ຫັກເອົາຄ່າຝາກ 100.000 ກີບ ສ່ວນທີ່ເຫຼືອ 600.000 ກີບ **ຂ** ຕ້ອງສົ່ງໃຫ້ **ກ**. **2.** **ກ** ໄດ້ຝາກຊີ້ນງົວນຳ **ຂ** ຈຳນວນ 50 ກິໂລກຼາມ ກຳນົດເວລາ ສາມວັນ, ຄ່າຝາກ 100.000 ກີບ ຕໍ່ວັນ (ລວມເປັນ 300.000 ກີບ) ເມື່ອຮອດກຳນົດແລ້ວ **ກ** ບໍ່ມາຮັບເອົາ **ຂ** ເຫັນວ່າ ຊີ້ນນັ້ນຈະເນົ່າເປື່ອຍ ຜູ້ກ່ຽວຈຶ່ງຂາຍຊີ້ນຈຳນວນດັ່ງກ່າວຕາມລາຄາທ້ອງຕະຫຼາດ ກິໂລກຼາມລະ 70.000 ກີບ (70.000 ກີບ x 50 ກິໂລກຼາມ) ລວມເງິນທັງໝົດໄດ້ 3.500.000 ກີບ, ຊຶ່ງ **ຂ** ແຈ້ງບອກກັບ **ກ** ວ່າ ຍ້ອນຊີ້ນຈະເນົ່າເປື່ອຍຕົນຈຶ່ງຂາຍອອກໃນລາຄາທີ່ຫຼຸດຈາກທ້ອງຕະຫຼາດ ຈາກ ກິໂລກຼາມລະ 70.000 ຕົນຂາຍແຕ່ກິໂລກຼາມລະ 50.000 ກີບ (ເປັນເງິນທີ່ໄດ້ທັງໝົດຈຳນວນ 2.500.000 ກີບ), ສ່ວນ 1.000.000 ກີບ ທີ່ເຫຼືອຈາກການຂາຍໂຕຈິງ ໄດ້ຫັກເອົາໄວ້ກ່ອນແລ້ວ. **ຂ** ໄດ້ຫັກເອົາຄ່າຝາກ ຈຳນວນ 300.000 ກີບ (2.500.000 ກີບ - 300.000 ກີບ) ຍັງເຫຼືອຈຳນວນ 2.200.000 ກີບ **ຂ** ໄດ້ສົ່ງຄືນໃຫ້ ກ ຜູ້ຝາກ. ກໍລະນີ **ຂ** ເຫັນວ່າ ຊີ້ນງົວກຳລັງຂາດຕະຫຼາດ ຈຶ່ງຂຶ້ນລາຄາຊີ້ນງົວ ກິໂລກຼາມລະ 70.000 ກີບ ແຕ່ສົ່ງເງິນໃຫ້ **ກ** ພຽງແຕ່ກິໂລກຼາມລະ 50.000 ກີບ ເຫັນວ່າ **ຂ** ບໍ່ມີຄວາມບໍລິສຸດໃຈ ຕາມ ວັກສອງຂອງມາດຕານີ້.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກເນື້ອໃນຂອງມາດຕາ 67 ພັນທະຂອງຜູ້ຝາກ ວັກສຸກທ້າຍ ຂອງກົດໝາຍວ່າດ້ວຍ ຂໍ້ຜູກພັນໃນ ແລະ ນອກສັນຍາ ປີ 2008 ແລະ ຂໍ້ 13 ມາດຕາ 2 ຂອງດຳລັດວ່າດ້ວຍການຈັດຕັ້ງປະຕິບັດການຄ້ຳປະກັນ ປີ 2011 ອອກມາກຳນົດເປັນມາດຕາໜຶ່ງສະເພາະ ເພື່ອໃຫ້ມີເນື້ອໃນຈະແຈ້ງ, ຮັດກຸມ ແລະ ຊັດເຈນຂຶ້ນຕື່ມ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 441, 442, 443 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 445 ວາມຮັບຜິດຊອບຂອງເຈົ້າຂອງໂຮງແຮມ ຫຼື ເຮືອນພັກ

ເຈົ້າຂອງໂຮງແຮມ ຫຼື ເຮືອນພັກ ຕ້ອງຮັບຜິດຊອບຕໍ່ຄວາມເສຍຫາຍຂອງພາຫະນະຂອງແຂກທີ່ມາພັກເຊົາ ໃນກໍລະນີເຈົ້າຂອງພາຫະນະ ໄດ້ແຈ້ງໃຫ້ເຈົ້າຂອງໂຮງແຮມ ຫຼື ເຮືອນພັກຊາບ.

ສຳລັບວັດຖຸມີຄ່າ ເຊັ່ນ ເງິນ, ຄຳ ຫຼື ເຄື່ອງປະດັບ ສິ່ງຂອງມີຄ່າອື່ນ ຈະໃຫ້ເຈົ້າຂອງໂຮງແຮມ ຫຼື ເຮືອນພັກຮັບຜິດຊອບ ກໍຕໍ່ເມື່ອຜູ້ເປັນເຈົ້າຂອງຊັບໄດ້ແຈ້ງ ແລະ ຝາກໄວ້ນຳເຈົ້າຂອງໂຮງແຮມ ຫຼື ເຮືອນພັກ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ກ່ຽວກັບ ຄວາມຮັບຜິດຊອບຂອງຜູ້ເປັນເຈົ້າຂອງໂຮງແຮມ ຫຼື ເຮືອນພັກ ໃນການປົກປັກຮັກສາຊັບ ຫຼື ພາຫະນະຂອງຜູ້ທີ່ມາພັກເຊົາ

ຕົວຢ່າງ	**ກ** ເຂົ້າພັກທີ່ໂຮງແຮມ ຂອງ **ຂ, ກ** ໄດ້ແຈ້ງຕໍ່ພະນັກງານໂຮງແຮມແລ້ວວ່າ ຜູ້ກ່ຽວໄດ້ຈອດລົດເກັງໄວ້ສະຖານທີ່ຈອດລົດຂອງໂຮງແຮມ, ເຊົ້າມື້ຕໍ່ມາ ລົດຂອງ **ກ** ມີຮອຍຂູດຂີດ ແລະ ທາງຂ້າງບຸ້ມ ລວມມູນຄ່າຄວາມເສຍຫາຍ 5.000.000 ກີບ, **ຂ** ທີ່ເປັນເຈົ້າຂອງໂຮງແຮມຕ້ອງຮັບຜິດຊອບໃຊ້ແທນຄ່າເສຍຫາຍດັ່ງກ່າວ ໃຫ້ **ກ**.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງຂຶ້ນໃໝ່ ເພື່ອກຳນົດຄວາມຮັບຜິດຊອບ ຂອງຜູ້ເປັນເຈົ້າຂອງໂຮງແຮມ, ເຮືອນພັກ ຫຼື ສະຖານທີ່ບໍລິການຕ່າງໆ ຕ້ອງມີຄວາມຮັບຜິດຊອບຕໍ່ຊັບສິນຂອງຜູ້ທີ່ມາໃຊ້ບໍລິການ ໃນເວລາເກີດມີຄວາມເສຍຫາຍ ຊຶ່ງກ່ອນທີ່ເຈົ້າຂອງໂຮງແຮມ, ເຮືອນພັກ ຫຼື ສະຖານທີ່ບໍລິການຕ່າງໆ ຈະມີຄວາມຮັບຜິດຊອບນັ້ນ ຜູ້ມາໃຊ້ບໍລິການ ຕ້ອງໄດ້ແຈ້ງ ກ່ຽວກັບສະພາບຂອງຊັບຕົນເອງ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 674-675 ຂອງປະມວນກົດໝາຍແພ່ງ ແລະ ພານິດໄທ; ມາດຕາ 595-598 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ; ມາດຕາ 701-702 ຂອງປະມວນກົດໝາຍແພ່ງເຢຍລະມັນ.
ມາດຕາອ້າງອີງ	ມາດຕາ 393, 411, 441, 442, 443, 471 ແລະ 476 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ປະເພນີປະຕິບັດຜ່ານມາ ສານໄດ້ຕັດສິນໃຫ້ ເຈົ້າຂອງໂຮງແຮມ ຫຼື ເຮືອນພັກ ຮັບຜິດຊອບໃຊ້ແທນຊັບ ຫຼື ພາຫະນະຂອງແຂກມາພັກເຊົ່າ.

ທ. ສັນຍາມອບໝາຍ

ມາດຕາ 446 ສັນຍາມອບໝາຍ

ສັນຍາມອບໝາຍ ແມ່ນ ການຕົກລົງຂອງຄູ່ສັນຍາ, ຊຶ່ງຜູ້ຮັບມອບໝາຍຕ້ອງເຮັດສິ່ງໃດໜຶ່ງໃນນາມ ແລະ ດ້ວຍທຶນຂອງຜູ້ມອບໝາຍ, ຜູ້ມອບໝາຍມີພັນທະຈ່າຍຄ່າຕອບແທນໃຫ້ຜູ້ຮັບມອບໝາຍ ຖ້າຫາກໄດ້ກຳນົດໄວ້ໃນສັນຍາ ຫຼື ກົດໝາຍ.

ຜູ້ຮັບມອບໝາຍ ຈະເຮັດສິ່ງໃດໜຶ່ງຕາມການມອບໝາຍໄດ້ ກໍຕໍ່ເມື່ອຫາກມີໃບມອບສັນທະເທົ່ານັ້ນ, ເວັ້ນເສຍແຕ່ໄດ້ເຮັດສິ່ງໃດໜຶ່ງທີ່ມີຄວາມສຳຄັນໜ້ອຍ.

ການມອບໝາຍບໍ່ໃຫ້ເກີນ ສາມປີ. ຖ້າບໍ່ໄດ້ກຳນົດເວລາໄວ້, ການມອບໝາຍກໍຈະມີຜົນບັງຄັບໃຊ້ໄດ້ພາຍໃນເວລາ ໜຶ່ງປີ ນັບແຕ່ເວລາໄດ້ເຮັດໃບມອບສັນທະ ເປັນຕົ້ນໄປ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ກ່ຽວກັບ ຄວາມໝາຍຂອງສັນຍາມອບໝາຍ, ເງື່ອນໄຂ, ຄ່າຕອບແທນ ແລະ ກຳນົດເວລາໃນການມອບໝາຍ.
ຕົວຢ່າງ	**ກ** ເຈົ້າຂອງບໍລິສັດ ມອບໝາຍໃຫ້ **ຂ** ພະນັກງານ ໄປເຈລະຈາຊື້ສິດນຳໃຊ້ທີ່ດິນກັບ **ຄ** ເພື່ອມາສ້າງເປັນສຳນັກງານຂອງບໍລິສັດ ໂດຍມີໃບມອບສັນທະທີ່ເປັນສິ່ງຢັ້ງຢືນ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກມາດຕາ 68 ສັນຍາມອບໝາຍ ຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນ ແລະ ນອກສັນຍາ ປີ 2008 ໂດຍໄດ້ ຕັດວັກສຸດທ້າຍຂອງມາດຕານີ້ອອກໄປກຳນົດໃນມາດຕາ 76, 77 ແລະ 215 ຂອງປະມວນກົດໝາຍແພ່ງ ເພື່ອໃຫ້ຈະແຈ້ງ ແລະ ສອດຄ່ອງກັນ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 643, 656 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.

ມາດຕາອ້າງອີງ	ມາດຕາ 32, 76, 77, 215, 447 ແລະ 448 ຂອງປະມວນກົດໝາຍແພ່ງ; ມາດຕາ 91 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 447 ສິດ ແລະ ພັນທະຂອງຜູ້ມອບໝາຍ

ຜູ້ມອບໝາຍ ມີສິດ ດັ່ງນີ້:

1. ຍົກເລີກສັນຍາໄດ້ທຸກເວລາ, ແຕ່ຖ້າການຍົກເລີກນັ້ນ ຫາກໄດ້ສ້າງຄວາມເສຍຫາຍໃຫ້ແກ່ຜູ້ຮັບມອບໝາຍ, ຜູ້ກ່ຽວຕ້ອງຮັບຜິດຊອບ;
2. ບໍ່ຮັບເອົາວຽກ ທີ່ຜູ້ຮັບມອບໝາຍໄດ້ປະຕິບັດໂດຍບໍ່ສອດຄ່ອງກັບ ຄຳແນະນຳ, ເນື້ອໃນຂອງສັນຍາ ຫຼື ເກີນຂອບເຂດຂອງການມອບໝາຍ.

ຜູ້ມອບໝາຍ ມີພັນທະ ດັ່ງນີ້:

1. ສະໜອງຊັບສິ່ງຂອງທີ່ຈຳເປັນ ໃຫ້ແກ່ຜູ້ຮັບມອບໝາຍ ເພື່ອປະຕິບັດວຽກງານຂອງຕົນ;
2. ຮັບຮູ້ວຽກງານທີ່ຜູ້ຮັບມອບໝາຍໄດ້ປະຕິບັດມາແລ້ວ ໃນຂອບເຂດການມອບໝາຍຂອງຕົນ;
3. ຕ້ອງຈ່າຍຄ່າຕອບແທນ ໃຫ້ຜູ້ຮັບມອບໝາຍ ໃນກໍລະນີທີ່ໄດ້ກຳນົດໄວ້ໃນສັນຍາ ແລະ ຮັບຮູ້ການໃຊ້ຈ່າຍຂອງຜູ້ຮັບມອບໝາຍ ໃນການປະຕິບັດວຽກງານ.

ຖ້າຜູ້ມອບໝາຍ ຫາກບໍ່ຮັບຮູ້ວຽກງານທີ່ຜູ້ຮັບມອບໝາຍໄດ້ປະຕິບັດ ໂດຍສອດຄ່ອງກັບການມອບໝາຍ ລວມທັງການໃຊ້ຈ່າຍໃນການປະຕິບັດວຽກງານນັ້ນ, ຜູ້ມອບໝາຍ ຕ້ອງຮັບຜິດຊອບໃຊ້ແທນຄ່າເສຍຫາຍທັງໝົດ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ກ່ຽວກັບ ສິດ ແລະ ພັນທະຂອງຜູ້ມອບໝາຍ
ຕົວຢ່າງ	**ສິດຂອງຜູ້ມອບໝາຍ:** **1. ກ** ເຈົ້າຂອງບໍລິສັດ ມອບໝາຍໃຫ້ **ຂ** ພະນັກງານຂັບລົດໃນບໍລິສັດຂອງ **ກ** ຂັບລົດເພື່ອຂົນສົ່ງເຂົ້າສານໃຫ້ **ຄ** ລູກຄ້າ ຢູ່ຕ່າງແຂວງ ຈຳນວນ 1 ໂຕນ. **ກ** ຕ້ອງຈັດສັນຫາ ເຂົ້າສານ ແລະ ລົດໃຫ້ **ຂ** ເພື່ອໃຫ້ **ຂ** ໄດ້ຂົນສົ່ງເຂົ້າສານໄປໃຫ້ **ຄ** ຕາມການຕົກລົງກັນລະຫວ່າງ **ກ** ແລະ **ຄ. ຂ** ຕ້ອງປົກປິດເຂົ້າສານເປັນຢ່າງດີບໍ່ໃຫ້ຖືກແດດຖືກຝົນຕະຫຼອດໄລຍະການເດີນທາງ ແລະ ພາຍຫຼັງທີ່ **ຂ** ປະຕິບັດວຽກສຳເລັດ **ກ** ມີພັນທະຕ້ອງຈ່າຍຄ່າຕອບແທນໃຫ້ **ຂ.** ໃນກໍລະນີທີ່ **ຂ** ຫາກໄດ້ນຳສົ່ງເຂົ້າສານໃຫ້ **ຄ** ຕາມການມອບໝາຍແລ້ວ, ແຕ່ **ກ** ໄດ້ປະຕິເສດບໍ່ຮັບເອົາການປະຕິບັດວຽກ ແລະ ຍົກເລີກສັນຍາກັບ **ຂ** ໃນກໍລະນີນີ້ ຖ້າມີຄວາມເສຍຫາຍເກີດຂຶ້ນ **ກ** ຕ້ອງຮັບຜິດຊອບເອງ. **2. ກ** ເຈົ້າຂອງບໍລິສັດມອບໝາຍໃຫ້ **ຂ** ພະນັກງານຂັບໃນບໍລິສັດຂອງ **ກ** ຂັບລົດຂົນສົ່ງເຂົ້າສານໄປສົ່ງໃຫ້ **ຄ** ລູກຄ້າ ຢູ່ຕ່າງແຂວງ ຈຳນວນ 1 ໂຕ່ນ. ແຕ່ **ຂ** ຫາກໄດ້ນຳສົ່ງເຂົ້າສານ ໃຫ້ **ຄ** ເກີນ ທີ່ **ກ** ແນະນຳ ຈາກຈຳນວນ 1 ໂຕ່ນ ເປັນ 2 ໂຕ່ນ ກໍລະນີນີ້ **ກ** ມີສິດປະຕິເສດບໍ່ຮັບເອົາການປະຕິບັດວຽກຂອງ **ຂ** ໄດ້ ແລະ ສາມາດຍົກເລີກສັນຍາ. **ພັນທະຂອງຜູ້ມອບໝາຍ:** **3. ກ** ເຈົ້າຂອງບໍລິສັດ ມອບໝາຍໃຫ້ **ຂ** ພະນັກງານຂັບລົດໃນບໍລິສັດຂອງ **ກ** ຂັບລົດເພື່ອຂົນສົ່ງກາເຟໃຫ້ **ຄ** ລູກຄ້າ ຢູ່ຕ່າງແຂວງ ຈຳນວນ 2 ໂຕນ. **ກ**

	ຕ້ອງຈັດສັນຫາ ກາເຟ ແລະ ລົດໃຫ້ **ຂ** ເພື່ອໃຫ້ **ຂ** ນຳໄປສົ່ງໃຫ້ **ຄ** ຕາມການຕົກລົງກັນລະຫວ່າງ **ກ** ແລະ **ຄ.** ເມື່ອ **ຂ** ປະຕິບັດຕາມຄຳແນະນຳຂອງ **ກ** ສຳເລັດແລ້ວ **ກ** ມີພັນທະຮັບຮູ້ວຽກ ແລະ ຈ່າຍຕອບແທນໃຫ້ **ຂ** ຕາມການຕົກລົງກັນ. ໃນກໍລະນີທີ່ **ຂ** ຂັບຂີ່ລົດປະຕິບັດໜ້າທີ່ນັ້ນ ຢາງລົດຮົ່ວ ເຮັດໃຫ້ບໍ່ສາມາດເດີນທາງຕໍ່ໄດ້ ຕ້ອງໄດ້ນອນພັກຕາມທາງ ເຮັດໃຫ້ມີຄ່າໃຊ້ຈ່າຍທາງນອກເພີ່ມຂຶ້ນ ເປັນຕົ້ນແມ່ນ ພັກເຊົາ ຄ່າສ້ອມແປງລົດ ກໍລະນີນີ້ **ກ** ຕ້ອງຮັບຜິດຊອບຄ່າໃຊ້ຈ່າຍທັງໝົດ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກເນື້ອໃນຂອງມາດຕາ 70 ພັນທະຂອງຜູ້ມອບໝາຍ ຂອງກົດໝາຍວ່າດ້ວຍ ຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ປີ 2008, ໂດຍໄດ້ແຍກ ສິດ ແລະ ພັນທະ ຂອງຜູ້ມອບໝາຍອອກເປັນແຕ່ລະຂໍ້ ເພື່ອໃຫ້ຈະແຈ້ງຂຶ້ນກວ່າເກົ່າ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 650-651 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 33, 34, 333, 394, 395, 446, 448 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 448 ສິດ ແລະ ພັນທະຂອງຜູ້ຮັບມອບໝາຍ

ຜູ້ຮັບມອບໝາຍ ມີສິດ ດັ່ງນີ້:

1. ຍົກເລີກສັນຍາໄດ້ທຸກເວລາ, ແຕ່ຖ້າການຍົກເລີກນັ້ນ ຫາກໄດ້ສ້າງຄວາມເສຍຫາຍໃຫ້ແກ່ຜູ້ມອບໝາຍ, ຜູ້ກ່ຽວຕ້ອງຮັບຜິດຊອບ;

2. ທວງເອົາຄ່າຕອບແທນ ຈາກຜູ້ມອບໝາຍໃນກໍລະນີທີ່ໄດ້ກຳນົດໄວ້ໃນສັນຍາ.

ຜູ້ຮັບມອບໝາຍ ມີພັນທະ ດັ່ງນີ້:

1. ປະຕິບັດຕາມການມອບໝາຍດ້ວຍຕົນເອງໂດຍສອດຄ່ອງກັບ ຄຳແນະນຳຂອງຜູ້ມອບໝາຍ ຫຼື ເນື້ອໃນຂອງສັນຍາ ແລະ ປະຕິບັດດ້ວຍຄວາມຈົງໃຈເໝືອນດັ່ງວຽກຂອງຕົນເອງ;

2. ລາຍງານ ແລະ ມອບຊັບສົ່ງຂອງ, ເງິນ ຫຼື ເອກະສານທີ່ຮັບຈາກການປະຕິບັດການມອບໝາຍນັ້ນ ໃຫ້ຜູ້ມອບໝາຍໂດຍທັນທີ;

3. ຮັບຜິດຊອບໃຊ້ແທນຄ່າເສຍຫາຍໃຫ້ແກ່ຜູ້ມອບໝາຍ ໃນກໍລະນີປະຕິບັດວຽກງານໂດຍບໍ່ສອດ ຄ່ອງກັບຄຳແນະນຳ ຫຼື ເກີນຂອບເຂດຂອງການມອບໝາຍ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ກ່ຽວກັບ ສິດ ແລະ ພັນທະຂອງຜູ້ຮັບມອບໝາຍ
ຕົວຢ່າງ	**ສິດຂອງຜູ້ຮັບມອບໝາຍ:** **1. ກ** ຜູ້ອຳນວຍການບໍລິສັດ ໄດ້ມອບໝາຍໃຫ້ **ຂ** ໄປຊື້ລົດຈັກສີແດງ ຈຳນວນ 10 ຄັນ ເພື່ອມາໃຊ້ວຽກບໍລິຫານຂອງບໍລິສັດ. **ຂ** ຜູ້ຮັບມອບໝາຍຕ້ອງປະຕິບັດຕາມຄຳແນະນຳຂອງ **ກ** ເທົ່ານັ້ນ, ພາຍຫຼັງທີ່ **ຂ** ຊື້ຖືກຕາມເປົ້າໝາຍຂອງ **ກ** ແລ້ວ **ຂ** ກໍມີສິດຮັບຄ່າຕອບແທນຕາມການຕົກລົງກັນ ລະຫວ່າງ **ກ** ແລະ **ຂ.** **ພັນທະຂອງຜູ້ຮັບມອບໝາຍ:** **1. ກ** ເຈົ້າຂອງບໍລິສັດ ມອບໝາຍໃຫ້ **ຂ** ພະນັກງານຂັບລົດໃນບໍລິສັດຂອງ **ກ**

	ຂັບລົດຂົນສົ່ງກາເຟໄປສົ່ງໃຫ້ **ຄ** ລູກຄ້າ ຢູ່ຕ່າງແຂວງ. **ກ** ຕ້ອງຈັດຫາລົດ ແລະ ກາເຟ ເພື່ອໃຫ້ **ຂ** ນຳໄປສົ່ງໃຫ້ **ຄ** ຕາມການຕົກລົງກັນລະຫວ່າງ **ກ** ແລະ **ຄ** ຊຶ່ງ **ກ** ໄດ້ບອກໃຫ້ **ຂ** ປົກຫຸ້ມກາເຟທີ່ຢູ່ລົດຂົນສົ່ງນັ້ນໃຫ້ດີ ແຕ່ **ຂ** ບໍ່ໄດ້ປົກປັກຮັກສາກາເຟດັ່ງກ່າວ ໃນໄລຍະຂອງການເດີນທາງເກີດມີຝົນຕົກ ເຮັດໃຫ້ກາເຟໄດ້ຮັບຄວາມເສຍຫາຍ, ກໍລະນີນີ້ **ຂ** ຕ້ອງຮັບຜິດຊອບຕໍ່ຄວາມເສຍຫາຍທີ່ເກີດຂຶ້ນ. **3. ກ** ຜູ້ອຳນວຍການບໍລິສັດ ໄດ້ມອບໝາຍໃຫ້ **ຂ** ໄປຊື້ລົດຈັກສີແດງ ຈຳນວນ 10 ຄັນ ເພື່ອມາໃຊ້ວຽກບໍລິຫານຂອງບໍລິສັດ, ພາຍຫຼັງທີ່ **ຂ** ຊື້ຖືກຕາມເປົ້າໝາຍຂອງ **ກ** ແລ້ວ **ຂ** ກໍມອບລົດ ແລະ ເອກະສານຕ່າງໆ ໃນການຊື້ລົດໃຫ້ **ກ**. ໃນກໍລະນີ **ຂ** ຫາກໄດ້ໄປຊື້ລົດສີອື່ນ ທີ່ບໍ່ຖືກຕາມເປົ້າໝາຍຂອງ **ກ** ແລ້ວ ທັງມີມູນຄ່າສູງກວ່າ **ຂ** ຕ້ອງຮັບຜິດຊອບຕໍ່ຄວາມເສຍຫາຍດັ່ງກ່າວ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກມາດຕາ 69 ພັນທະຂອງຜູ້ຮັບມອບໝາຍຂອງກົດໝາຍວ່າດ້ວຍ ຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ປີ 2008, ໂດຍໄດ້ແຍກ ສິດ ແລະ ພັນທະຂອງຜູ້ຮັບມອບໝາຍອອກເປັນແຕ່ລະຂໍ້ເພື່ອໃຫ້ຈະແຈ້ງຂຶ້ນກວ່າເກົ່າ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 645-648, 651 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 393, 394, 446, 447, 471, 472 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ນ. ສັນຍາບໍລິການ

ມາດຕາ 449 ສັນຍາບໍລິການ

ສັນຍາບໍລິການ ແມ່ນ ການຕົກລົງຂອງຄູ່ສັນຍາ, ຊຶ່ງຜູ້ບໍລິການຕ້ອງຮັບໃຊ້, ເຮັດ ຫຼື ສ້າງສິ່ງໃດໜຶ່ງ ຫຼື ໃຫ້ຄຳປຶກສາແກ່ຜູ້ໃຊ້ບໍລິການ ແລະ ຜູ້ໃຊ້ບໍລິການ ຕ້ອງຈ່າຍຄ່າບໍລິການນັ້ນ ຕາມລາຄາທີ່ໄດ້ຕົກລົງກັນ.

ຈຸດປະສົງ	ເພື່ອເຮັດໃຫ້ຮູ້ກ່ຽວກັບ ນິຍາມຂອງສັນຍາບໍລິການ,ພ້ອມທັງໃຫ້ເຫັນສິດ ແລະ ພັນທະພື້ນຖານຂອງຄູ່ສັນຍາບໍລິການ.
ຕົວຢ່າງ	**ກ** ຕົກລົງໃຫ້ **ຂ** ສ້ອມແປງລົດຈັກໃຫ້ຜູ້ກ່ຽວ (ປ່ຽນລູກສູບໃໝ່) ລາຄາສ້ອມແປງ 1.000.000 ກີບ, **ຂ** ຕ້ອງໄດ້ສ້ອມແປງລົດຈັກໃຫ້ **ກ** ໃນສວ່ນທີ່ມັນເປ່ເພ ຄືປ່ຽນລູກສູບໃໝ່ ຕາມທີ່ **ກ** ຕ້ອງການ, ເມື່ອ **ຂ** ສ້ອມແປງແລ້ວ **ກ** ຕ້ອງໄດ້ຈ່າຍຄ່າສ້ອມແປງຕາມລາຄາທີ່ໄດ້ຕົກລົງກັນ.
ເຫດຜົນໃນການຮັກສາເນື້ອໃນເດີມ	ມາດຕານີ້ຮັກສາເນື້ອໃນເດີມ ມາດຕາ 71 ສັນຍາບໍລິການ ຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນ ແລະ ນອກສັນຍາ ປີ 2008, ຍັງສອດຄ່ອງກັບເງື່ອນໄຂເສດຖະກິດ ສັງຄົມ ໃນປັດຈຸບັນ ຈຶ່ງບໍ່ຈຳເປັນຕ້ອງປັບປຸງ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 450-452 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 450 ປະເພດຂອງສັນຍາບໍລິການ

ສັນຍາບໍລິການ ມີ ສອງ ປະເພດ ຄື:

1. ສັນຍາບໍລິການທົ່ວໄປ;
2. ສັນຍາບໍລິການດ້ານວິຊາການ.

ສັນຍາບໍລິການທົ່ວໄປ ແມ່ນ ການຕົກລົງຂອງຄູ່ສັນຍາ, ຊຶ່ງຜູ້ບໍລິການຕ້ອງເຮັດ ຫຼື ສ້າງສິ່ງໃດໜຶ່ງ ທີ່ແນ່ນອນ ເຊັ່ນ ສ້ອມແປງ, ຕັດຜົມ, ຕັດຫຍິບ, ການທ່ອງທ່ຽວ, ກິນດື່ມ.

ສັນຍາບໍລິການດ້ານວິຊາການ ແມ່ນ ການຕົກລົງຂອງຄູ່ສັນຍາ, ຊຶ່ງຜູ້ບໍລິການຕ້ອງໃຫ້ການບໍລິການໃນການຄົ້ນຄວ້າ, ວິເຄາະ, ວິໄຈ, ສະໜອງຂໍ້ມູນ, ໃຫ້ຄຳປຶກສາ, ຄຳແນະນຳ, ສ້າງໂປຣແກຣມ, ສ້າງບົດລາຍງານ ແລະ ອື່ນໆ ໃຫ້ຖືກຕ້ອງຕາມຫຼັກວິຊາການ.

ສັນຍາບໍລິການທົ່ວໄປທີ່ມີມູນຄ່າສູງ ແລະ ສັນຍາບໍລິການດ້ານວິຊາການ ຕ້ອງເຮັດເປັນລາຍລັກອັກ ສອນ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ກ່ຽວກັບ ປະເພດຂອງການບໍລິການ ມີສອງປະເພດທີ່ແຕກຕ່າງກັນຄື: ບໍລິການທົ່ວໄປ ແລະ ບໍລິການດ້ານວິຊາການ ພ້ອມທັງໃຫ້ຮູ້ເຖິງປະເພດຂອງສັນຍາບໍລິການ ທີ່ມີເງື່ອນໄຂຕ້ອງເຮັດ ເປັນລາຍລັກອັກສອນ.
ຕົວຢ່າງ	**ສັນຍາບໍລິການທົ່ວໄປ:** **1. ກ** ໄປຕັດຜົມຢູ່ຮ້ານ **ຂ,** ເມື່ອສຳເລັດແລ້ວ **ກ** ກໍຕ້ອງຈ່າຍຄ່າຕັດຜົມຕາມລາຄາທີ່ຕົກລົງກັນໃຫ້ **ຂ.** **ສັນຍາບໍລິການທົ່ວໄປທີ່ມີມູນຄ່າສູງ:** **2. ກ** ໄດ້ນຳເອົາລົດໄປສ້ອມແປງຢູ່ຮ້ານສ້ອມແປງລົດຂອງ **ຂ** ໂດຍໄດ້ຕົກລົງກັນ ຍົກຈັກລົດ, ເຮັດສີໃໝ່ ມູນຄ່າສ້ອມແປງ 15.000.000 ກີບ, ໄດ້ກຳນົດເວລາສ້ອມແປງ 20 ວັນ ໄວ້ໃນສັນຍາບໍລິການ. **ສັນຍາບໍລິການວິຊາການ:** **3. ກ** ຕົກລົງໃຫ້ **ຂ** ວິໄຈດິນສອນໃຫ້ຜູ້ກ່ຽວນີ້ແມ່ນການບໍລິການທາງດ້ານວິຊາການ **ຂ** ຕ້ອງວິໄຈດິນສອນຕາມຈຸດປະສົງຂອງ **ກ** ແລະ **ກ** ຕ້ອງ ຈ່າຍຄ່າວິໄຈດິນ ຈຳນວນ 5.000.000 ກີບ ໃຫ້ **ຂ** ຕາມທີ່ໄດ້ຕົກລົງກັນໄວ້ໃນສັນຍາ.
ເຫດຜົນໃນການປັບປຸງ	ມາດຕານີ້ໄດ້ປັບປຸງເນື້ອໃນມາດຕາ 72 ປະເພດສັນຍາບໍລິການ ຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນ ແລະ ນອກສັນຍາ ປີ 2008, ຍັງບໍ່ຄົບແລະຮັດກຸມ ໂດຍສະເພາະຮູບການເຮັດສັນຍາບໍລິການທົ່ວໄປທີ່ມີມູນຄ່າສູງ ຕ້ອງກຳນົດໃຫ້ເຮັດເປັນລາຍລັກອັກສອນເພື່ອຫຼີກລ້ຽງການປະຕິເສດຂອງຄູ່ສັນຍາ ໃນເວລາເກີດຂໍ້ຂັດແຍ່ງ ສະນັ້ນ ຈຶ່ງໄດ້ປັບປຸງ ຮູບການເຮັດສັນຍາບໍລິການ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 451 ແລະ 452 ຂອງປະມວນກົດໝາຍແພ່ງ. ມາດຕາ 369 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 451 ສິດ ແລະ ພັນທະຂອງຜູ້ບໍລິການ

ຜູ້ບໍລິການ ມີສິດ ດັ່ງນີ້:

1. ໄດ້ຮັບຄ່າບໍລິການຕາມທີ່ໄດ້ຕົກລົງກັນໄວ້ໃນສັນຍາ;

2. ຍຶດໝ່ວງຊັບທີ່ບໍລິການ, ຢຸດການບໍລິການ ໃນກໍລະນີທີ່ຜູ້ໃຊ້ບໍລິການບໍ່ຊຳລະຄ່າບໍລິການ.

ຜູ້ບໍລິການ ມີພັນທະ ດັ່ງນີ້:

1. ໃຫ້ບໍລິການຖືກຕ້ອງຕາມຫຼັກວິຊາການ, ມີຄຸນນະພາບ, ສອດຄ່ອງກັບຄວາມຕ້ອງການ ຂອງຜູ້ໃຊ້ບໍລິການ ແລະ ນຳໃຊ້ອຸປະກອນທີ່ດີ;

2. ປົກປັກຮັກສາວັດຖຸສິ່ງຂອງ ຂອງຜູ້ໃຊ້ບໍລິການ;

3. ມອບຊັບສິ່ງຂອງ ຫຼື ໝາກຜົນຂອງການບໍລິການ ທີ່ຕົນໄດ້ເຮັດ ຫຼື ສ້າງສຳເລັດຕາມກຳນົດ ເວ ລາ ແລະ ມີຄຸນນະພາບ ໃຫ້ຜູ້ໃຊ້ບໍລິການ;

4. ຮັກສາຄວາມລັບຂອງຜູ້ໃຊ້ບໍລິການ;

5. ໃນກໍລະນີສັນຍາຫາກໝົດກຳນົດເວລາແລ້ວ, ແຕ່ການບໍລິການຍັງບໍ່ທັນສຳເລັດ ແລະ ຜູ້ໃຊ້ ບໍ ລິການກໍບໍ່ທັກທ້ວງ, ຜູ້ບໍລິການຕ້ອງສືບຕໍ່ຈົນກວ່າຈະສຳເລັດ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ກ່ຽວກັບ ການປະຕິບັດສິດ ແລະ ພັນທະຂອງຜູ້ບໍລິການ ພາຍຫຼັງເຮັດສັນຍາບໍລິການ.
ຕົວຢ່າງ	**ກ** ຕົກລົງຕິດຕັ້ງໄຟຟ້າພາຍໃນເຮືອນໃຫ້ **ຂ** ລາຄາ 10.000.000 ກີບ ໃນນີ້ **ກ** ຜູ້ບໍລິການມີພັນທະຕິດຕັ້ງໄຟຟ້າຕາມຈຸດປະສົງຂອງ **ຂ** ແລະ ຜູ້ກ່ຽວກໍມີ ສິດໄດ້ຮັບຄ່າບໍລິການຕາມຈຳນວນດັ່ງກ່າວ ຖ້າ **ຂ** ຫາກບໍ່ຍອມຈ່າຍຄ່າບໍລິການ ຕາມການຕົກລົງ **ກ** ມີສິດບໍ່ສືບຕໍ່ບໍລິການ ຫຼື ບໍ່ເປີດໄຟໃຫ້ນຳໃຫ້ກໍໄດ້.
ເຫດຜົນໃນການປັບປຸງ	ເນື່ອງຈາກວ່າ ມາດຕາ 73 ສິດ ແລະ ພັນທະຂອງຜູ້ບໍລິການ ຂອງກົດໝາຍວ່າ ດ້ວຍຂໍ້ຜູກພັນໃນແລະນອກສັນຍາປີ 2008, ບໍ່ທັນໄດ້ກຳນົດກ່ຽວກັບສິດຍຶດ ໝ່ວງການບໍລິການໃນກໍລະນີຜູ້ໃຊ້ບໍລິການບໍ່ຈ່ຍຄ່າບໍລິການນີ້ມັນກໍມີມາດຕະ ການໜຶ່ງເພື່ອຮັບປະກັນແກ່ຜູ້ບໍລິການໄດ້ຄ່າບໍລິການຕາມທີ່ຕົກລົງກັນ ສະນັ້ນ ຈຶ່ງປັບປຸງ ໃຫ້ມີສິດຍຶດໝ່ວງ ການບໍລິການ. ນອກນັ້ນ ຍັງໄດ້ລຳດັບ ສິດແລະ ພັນທະຂອງ ຜູ້ບໍລິການໃຫ້ແຈ້ງຕື່ມອີກ.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງຂອງປະເທດອື່ນ	ມາດຕາ 526 ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2005.
ມາດຕາອ້າງອີງ	ມາດຕາ 450 ແລະ 452 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 452 ສິດ ແລະ ພັນທະຂອງຜູ້ໃຊ້ບໍລິການ

ຜູ້ໃຊ້ບໍລິການ ມີສິດ ດັ່ງນີ້:

1. ທວງເອົາສິ່ງ ທີ່ຕົນນຳໄປໃຊ້ບໍລິການ;

2. ສະເໜີໃຫ້ຜູ້ບໍລິການ ປັບປຸງແກ້ໄຂຈຸດບົກພ່ອງ;

3. ບໍ່ຮັບເອົາການບໍລິການ ທີ່ບໍ່ຖືກຕ້ອງຕາມການຕົກລົງ;

4. ປ່ຽນຜູ້ບໍລິການຄົນໃໝ່ ແຕ່ຕ້ອງໄດ້ຈ່ຍຄ່າບໍລິການໃຫ້ຜູ້ບໍລິການຄົນເກົ່າໃນສິ່ງທີ່ໄດ້ເຮັດ ຫຼື ສ້າງແລ້ວ.

ຜູ້ໃຊ້ບໍລິການ ມີພັນທະ ດັ່ງນີ້:

1. ສະໜອງວັດຖຸປະກອນ ຫຼື ຂໍ້ມູນທີ່ຈຳເປັນໃຫ້ແກ່ຜູ້ບໍລິການ;

2. ຮັບເອົາຊັບສິ່ງຂອງ ຫຼື ໝາກຜົນຂອງການບໍລິການທີ່ຜູ້ບໍລິການໄດ້ເຮັດ ຫຼື ສ້າງສຳເລັດແລ້ວ ແລະ ຈ່ຍຄ່າບໍລິການ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ກ່ຽວກັບ ການປະຕິບັດສິດ ແລະ ພັນທະຂອງຜູ້ໃຊ້ບໍລິການ ພາຍຫຼັງເຮັດສັນຍາບໍລິການ.

ຕົວຢ່າງ	**ກ** ຕົກລົງທາສີເຮືອນໃຫ້ **ຂ**, ລາຄາ 10.000.000 ກີບ ເມື່ອສຳເລັດແລ້ວ **ຂ** ມີພັນທະຈ່າຍຄ່າບໍລິການຕາມຈຳນວນດັ່ງກ່າວໃຫ້ **ກ** ຖ້າ **ຂ** ຫາກບໍ່ຍອມຈ່າຍຄ່າບໍລິການຕາມການຕົກລົງ **ກ** ກໍມີສິດ ທວງເອົາຄ່າບໍລິການ ຈາກ **ຂ**.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງເນື້ອໃນມາດຕາ 73 ສິດ ແລະ ພັນທະຂອງຜູ້ບໍລິການ ຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນແລະນອກສັນຍາປີ 2008, ກຳນົດສິດ ແລະ ພັນທະຂອງ ຜູ້ໃຊ້ບໍລິການແບບລວມໆ ບໍ່ທັນໄຈ້ແຍກໃຫ້ເຫັນຢ່າງເດັ່ນຊັດ ສະນັ້ນ ຈຶ່ງໄດ້ປັບປຸງ ໂດຍລຳດັບ ສິດ ແລະພັນທະຂອງ ຜູ້ໃຊ້ບໍລະການຈະແຈ້ງຂຶ້ນຕື່ມ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 450, 451 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ບ. ສັນຍາຮັບເໝົາກໍ່ສ້າງ

ມາດຕາ 453 ສັນຍາຮັບເໝົາກໍ່ສ້າງ

ສັນຍາຮັບເໝົາກໍ່ສ້າງ ແມ່ນ ການຕົກລົງຂອງຄູ່ສັນຍາ, ຊຶ່ງຜູ້ຮັບເໝົາຕ້ອງກໍ່ສ້າງສິ່ງໃດໜຶ່ງ ທີ່ແນ່ ນອນຕາມຈຸດປະສົງຂອງເຈົ້າຂອງໂຄງການ ດ້ວຍວັດສະດຸກໍ່ສ້າງ ຫຼື ພາຫະນະຂອງເຈົ້າຂອງໂຄງການ ຫຼື ຂອງຕົນເອງ, ສ່ວນເຈົ້າຂອງໂຄງການນັ້ນ ຕ້ອງຮັບເອົາ ແລະ ຈ່າຍຄ່າສິ່ງກໍ່ສ້າງ ຊຶ່ງໄດ້ເຮັດ ແລະ ຢັ້ງຢືນ ຜົນສຳເລັດຮ່ວມກັນແລ້ວ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ກ່ຽວກັບ ຫຼັກການຂອງການເຮັດສັນຍາຮັບເໝົາກໍ່ສ້າງ ທັງສິດ ແລະ ພັນທະຂອງຄູ່ສັນຍາເກີດຂຶ້ນເມື່ອເຮັດສັນຍາ.
ຕົວຢ່າງ	**ກ** ຕົກລົງຮັບເໝົາກໍ່ສ້າງເຮືອນວິນລາໜຶ່ງຫຼັງ ໃຫ້ **ຂ**, ມູນຄ່າ 100.000.000 ກີບ, ພັນທະພື້ນຖານຂອງ **ກ** ຕ້ອງກໍ່ສ້າງເຮືອນວິນລາໃຫ້ **ຂ** ສຳເລັດຕາມ ຈຸດປະສົງຂອງ **ຂ** ແລະ **ຂ** ເຈົ້າຂອງໂຄງການກໍຕ້ອງຮັບເອົາເຮືອນ ແລະ ຈ່າຍຄ່າ ຮັບເໝົາໃຫ້ແກ່ **ກ** ຕາມມູນຄ່າດັ່ງກ່າວ.
ເຫດຜົນໃນການປັບປຸງ	ເນື້ອໃນໄດ້ປັບປຸງ ມາດຕາ 75 ສັນຍາຮັບເໝົາກໍ່ສ້າງ ຂອງກົດໝາຍວ່າດ້ວຍ ຂໍ້ຜູກພັນໃນແລະນອກສັນຍາ ປີ 2008, ຍັງບໍ່ທັນຮັດກຸມເທົ່າທີ່ຄວນ ໂດຍ ສະເພາະແມ່ນການມອບສິ່ງກໍ່ສ້າງສຳເລັດແລ້ວ ຕ້ອງມີການຢັ້ງຢືນຜົນສຳເລັດ ຂອງສິ່ງກໍ່ສ້າງຮ່ວມກັນເພື່ອປ້ອງກັນບໍ່ໃຫ້ເກີດມີຂໍ້ຂັດແຍ່ງ ແລ້ວເຈົ້າຂອງ ໂຄງການຈຶ່ງຈ່າຍຄ່າສິ່ງກໍ່ສ້າງຕາມທີ່ຕົກລົງກັນ ສະນັ້ນ ຈຶ່ງໄດ້ປັບປຸງຈຸດນີ້.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 632 ຂອງປະມວນກົດໝາຍຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 449 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 454 ສິດ ແລະ ພັນທະຂອງເຈົ້າຂອງໂຄງການ

ເຈົ້າຂອງໂຄງການ ມີສິດ ດັ່ງນີ້:

1. ກວດກາສິ່ງທີ່ໄດ້ກໍ່ສ້າງ, ຖ້າສິ່ງທີ່ໄດ້ກໍ່ສ້າງນັ້ນ ຫາກບໍ່ໄດ້ປະຕິບັດ ຫຼື ປະຕິບັດບໍ່ຖືກຕ້ອງ ຕາມເງື່ອນໄຂຂອງສັນຍາ ອັນພາໃຫ້ສິ່ງກໍ່ສ້າງນັ້ນບໍ່ໄດ້ຕາມມາດຕະຖານເຕັກນິກ, ການອອກແບບ ຫຼື ເປ່ເພ,

ເຈົ້າຂອງໂຄງການ ມີສິດແຈ້ງໃຫ້ຜູ້ຮັບເໝົາ ແກ້ໄຂ ຫຼື ສ້ອມແປງ ພາຍໃນເວລາອັນຄວນ ຫຼື ທວງເອົາການ ໃຊ້ແທນຄ່າເສຍຫາຍ, ຖ້າການໃຊ້ຈ່າຍໃນການປ່ອແປງນັ້ນ ຫາກເປັນວັດສະດຸກໍ່ສ້າງ ຫຼື ພາຫະນະຂອງຕົນ;

2. ເຈົ້າຂອງໂຄງການ ອາດຂໍຍົກເລີກສັນຍາ ແລະ ທວງເອົາການໃຊ້ແທນຄ່າເສຍຫາຍກໍໄດ້ ຖ້າຜູ້ຮັບເໝົາຫາກບໍ່ແກ້ໄຂ ຫຼື ສ້ອມແປງພາຍໃນເວລາ ທີ່ກຳນົດຂ້າງເທິງ.

ເຈົ້າຂອງໂຄງການ ມີພັນທະ ດັ່ງນີ້:

1. ຈ່າຍຄ່າສິ່ງກໍ່ສ້າງຕາມ ລາຄາ ແລະ ກຳນົດເວລາ ທີ່ຕົກລົງກັນໄວ້ໃນສັນຍາ;
2. ຕ້ອງຈັດຫາວັດສະດຸກໍ່ສ້າງ ຫຼື ພາຫະນະໃຫ້ມີຄຸນນະພາບ, ຖືກຕ້ອງຕາມມາດຕະຖານ ເຕັກ ນິກ ແລະ ໃຫ້ທັນເວລາ ຕາມທີ່ໄດ້ກຳນົດໄວ້ໃນສັນຍາ;
3. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ກ່ຽວກັບ ເຈົ້າຂອງໂຄງການເຂົ້າໃຈການປະຕິບັດສິດ ແລະ ພັນທະພື້ນຖານຂອງຕົນ ພາຍຫຼັງເຮັດສັນຍາ.
ຕົວຢ່າງ	**ກ** ຕົກລົງໃຫ້ **ຂ** ກໍ່ສ້າງຮ້ານອາຫານ ມູນຄ່າ 200.000.000 ກີບ ຕາມແບບກໍ່ສ້າງທີ່ໄດ້ແຕ້ມໄວ້, ມີຄວາມກວ້າງ 20 ແມັດ, ຍາວ 50 ແມັດ, ເສົາກວ້າງ 20 ຊັງຕີແມັດ, ສູງ 2,5 ແມັດ, ສ້າງໂຄງຫຼັງຄາດ້ວຍໂຄງເຫຼັກ, ມຸງດ້ວຍກະເບື້ອງສີ ຄຸນນະພາບ ລະດັບເອ, ເຫຼັກເທເສົາຝີ 14, ປູພື້ນດ້ວຍກາໂລຄຸນນະພາບ ລະດັບ ເອ, ຫ້ອງນ້ຳ 4 ຫ້ອງ ແລະ ຫ້ອງຄົວ 1 ຫ້ອງ, ກຳນົດເວລາກໍ່ສ້າງ ແປດເດືອນ. 1. ໃນເວລາກໍ່ສ້າງ **ກ** ມີສິດກວດກາ ວັດສະດຸກໍ່ສ້າງ ແລະ ການດຳເນີນ ກໍ່ສ້າງໃນກໍລະນີ **ຂ** ຫາກບໍ່ປະຕິບັດຕາມມາດຕະຖານເຕັກນິກ ແລະ ການອອກແບບຕາມສັນຍາ **ກ** ມີສິດແຈ້ງໃຫ້ **ຂ** ແກ້ໄຂ ຫຼື ສ້ອມແປງ ໃນເວລາອັນຄວນ. ໃນກໍລະນີທີ່ ເຫັນຄວາມຜິດພາດ **ກ** ໄດ້ບອກໃຫ້ ປ່ຽນວັດສະດຸຕາມທີ່ກຳນົດແລ້ວ ແຕ່ຍັງບໍ່ປ່ຽນແປງ ຫຼື ແກ້ໄຂ. ຖ້າ ຫາກມີການເສຍຫາຍ **ກ** ສາມາດທວງເອົາການໃຊ້ແທນ ຫຼື ຍົກເລີກ ສັນຍາໄດ້. 2. ຖ້າ **ຂ** ຫາກໄດ້ປະຕິບັດຕາມມາດຕະຖານເຕັກນິກ ໃຊ້ວັດສະດຸກໍ່ສ້າງ ທີ່ມີຄຸນນະພາບ ຖືກຕ້ອງຕາມສັນຍາ ແລະ ຕາມກຳນົດເວລາແລ້ວ, **ກ** ຕ້ອງໄດ້ຈ່າຍຄ່າສິ່ງກໍ່ສ້າງຕາມທີ່ໄດ້ຕົກລົງກັນ.
ເຫດຜົນໃນການປັບປຸງ	ເນື້ອໃນ ມາດຕາ 75 ສັນຍາຮັບເໝົາກໍ່ສ້າງ ຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນ ແລະນອກສັນຍາປີ 2008, ຍັງກວມລວມເອົາທັງສິດແລະພັນທະຂອງເຈົ້າຂອງ ໂຄງການເຂົ້ານຳເຮັດໃຫ້ເຂົ້າໃຈຍາກ ແລະ ບໍ່ຈະແຈ້ງ. ນອກນັ້ນ ການກຳນົດສິດ ແລະພັນທະຂອງເຈົ້າຂອງໂຄງການ ກໍຍັງບໍ່ຄົບຖ້ວນໂດຍສະເພາະການກວດ ກາສິ່ງກໍ່ສ້າງໃຫ້ສອດຄ່ອງຕາມການອອກແບບກໍ່ສ້າງ ສະນັ້ນ ຈຶ່ງໄດ້ປັບປຸງ ຄື ລຳດັບສິດແລະພັນທະຂອງເຈົ້າຂອງໂຄງການໃຫ້ລະອຽດ ແລະ ເພີ່ມສິດໃນ ການກວດກາສິ່ງກໍ່ສ້າງດັ່ງກ່າວຕື່ມ.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງຂອງປະເທດອື່ນ	ມາດຕາ 559, 562 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 394 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 455 ສິດ ແລະ ພັນທະຂອງຜູ້ຮັບເໝົາ

ຜູ້ຮັບເໝົາ ມີສິດ ດັ່ງນີ້:

1. ສະເໜີຕໍ່ເຈົ້າຂອງໂຄງການເມື່ອຕົນບໍ່ສາມາດປະຕິບັດຕາມຄຳແນະນຳ ຫຼື ນຳໃຊ້ວັດສະດຸກໍ່ສ້າງ ຫຼື ພາຫະນະຂອງເຈົ້າຂອງໂຄງການທີ່ບໍ່ໄດ້ມາດຕະຖານເຕັກນິກ. ຖ້າເຈົ້າຂອງໂຄງການ ຫາກບໍ່ແກ້ໄຂພາຍໃນ ເວລາອັນເໝາະສົມແລ້ວ, ຜູ້ຮັບເໝົາ ມີສິດຂໍຍົກເລີກສັນຍາ ແລະ ທວງເອົາການໃຊ້ແທນຄ່າເສຍຫາຍ;
2. ທວງເອົາຄ່າຮັບເໝົາກໍ່ສ້າງ ທີ່ສຳເລັດແລ້ວ ຕາມລາຄາ ແລະ ກຳນົດເວລາ ທີ່ໄດ້ຕົກລົງກັນ.

ຜູ້ຮັບເໝົາ ມີພັນທະ ດັ່ງນີ້:

1. ດຳເນີນການກໍ່ສ້າງຕາມແບບແຜນຜັງການກໍ່ສ້າງ ຂອງເຈົ້າຂອງໂຄງການ, ຕາມກຳນົດເວລາທີ່ໄດ້ຕົກລົງກັນ;
2. ຮັບຜິດຊອບປົກປັກຮັກສາ ແລະ ນຳໃຊ້ ວັດສະດຸກໍ່ສ້າງ ຫຼື ພາຫະນະທີ່ເຈົ້າຂອງໂຄງການ ຈັດຫາມາໃຫ້ນັ້ນ ໃຫ້ຖືກຕ້ອງ, ຖ້າການນຳໃຊ້ນັ້ນ ຫາກບໍ່ຖືກຕ້ອງ ຜູ້ກ່ຽວຕ້ອງຮັບຜິດຊອບ;
3. ສະຫຼຸບການນຳໃຊ້ວັດສະດຸກໍ່ສ້າງ ແລະ ສົ່ງວັດສະດຸກໍ່ສ້າງ ທີ່ຍັງເຫຼືອຄືນໃຫ້ເຈົ້າຂອງໂຄງການ;
4. ຮັບຜິດຊອບຕໍ່ເຈົ້າຂອງໂຄງການ ກ່ຽວກັບການກະທຳຂອງຜູ້ຮັບເໝົາຕໍ່;
5. ຮັບຜິດຊອບຕໍ່ຄວາມເສຍຫາຍທີ່ເກີດຈາກການດຳເນີນການກໍ່ສ້າງຂອງຕົນ;
6. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ກ່ຽວກັບ ສິດ ແລະ ພັນທະ ຂອງຜູ້ຮັບເໝົາ.
ຕົວຢ່າງ	**1. ຜູ້ຮັບເໝົາມີສິດ:** **ຂ** ຕົກລົງໃຫ້ **ກ** ກໍ່ສ້າງອາຄານໂຮງຮຽນ 1 ຫລັງມູນຄ່າ 500.000.000 ກີບ. **ກ** ຜູ້ຮັບເໝົາຕ້ອງກໍ່ສ້າງໂຮງຮຽນຕາມມາດຕະຖານ ແລະ ເຕັກນິກ.ໃນກໍລະນີ **ກ** ໄດ້ສະເໜີໃຫ້ **ຂ** ເຈົ້າຂອງໂຄງການ ຮູ້ວ່າບໍ່ສາມາດນຳໃຊ້ວັດສະດຸກໍ່ສ້າງທີ່ບໍ່ໄດ້ມາດຕະຖານຖ້າຫາກ **ຂ** ບໍ່ແກ້ໄຂວັດສະດຸອຸປະກອນຕາມການສະເໜີໃນເວລາກຳນົດແລ້ວ **ກ** ມີສິດຂໍຍົກເລີກສັນຍາ ແລະ ທວງເອົາການໃຊ້ແທນຄ່າເສນຫາຍຕົວຈິງ. **2. ຜູ້ຮັບເໝົາມີພັນທະ:** **ຂ** ຕົກລົງໃຫ້ **ກ** ກໍ່ສ້າງອາຄານໂຮງຮຽນ 1 ຫຼັງ ມູນຄ່າ 500.000.000 ກີບ **ກ** ຜູ້ຮັບເໝົາຕ້ອງກໍ່ສ້າງໂຮງຮຽນຕາມແບບແຜນການກໍ່ສ້າງຂອງ **ຂ** ຕາມກຳນົດເວລາທີ່ໄດ້ກຳນົດໄວ້ໃນກົດໝາຍ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງເນື້ອໃນມາດຕາ 75 ສັນຍາຮັບເໝົາກໍ່ສ້າງ ຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນແລະນອກສັນຍາປີ 2008, ກວມລວມເກີນໄປແລະ ບໍ່ຈະແຈ້ງ ສະນັ້ນ ຈຶ່ງປັບປຸງຄື ຕັດເອົາ "**ກໍ່ສ້າງ**" ອອກຈາກ ຜູ້ຮັບເໝົາ, ເພີ່ມການປະຕິບັດພັນທະຕາມທີ່ກຳກົດໝາຍທີ່ກ່ຽວເຂົ້າ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 394, 395 451 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 456 ການຮັບປະກັນຄຸນນະພາບຂອງ ສິ່ງກໍ່ສ້າງ

ຜູ້ຮັບເໝົາ ຕ້ອງຮັບປະກັນສິ່ງກໍ່ສ້າງ, ຕາມມາດຕະຖານເຕັກນິກ, ກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ.

ພາຍຫຼັງທີ່ເຈົ້າຂອງໂຄງການໄດ້ຮັບເອົາສິ່ງກໍ່ສ້າງແລ້ວ ຫາກຍັງເຫັນວ່າມີສິ່ງບົກພ່ອງໃນການກໍ່ສ້າງ ນັ້ນ, ເຈົ້າຂອງໂຄງການ ມີສິດທວງໃຫ້ຜູ້ຮັບເໝົາ ທຳການສ້ອມແປງຄືນ ໂດຍບໍ່ເສຍຄ່າສ້ອມແປງແຕ່ຢ່າງໃດ ຖ້າ ກຳນົດເວລາຮັບປະກັນນັ້ນ ຫາກຍັງບໍ່ທັນໄດ້ສິ້ນສຸດ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ກ່ຽວກັບ ຄວາມຮັບຜິດຊອບຂອງຜູ້ຮັບເໝົາເມື່ອມີສິ່ງບົກພ່ອງ ໃນຊັບທີ່ເປັນເປົ້າໝາຍການຮັບເໝົານັ້ນ.
ຕົວຢ່າງ	**ກ** ຕົກລົງ ກໍ່ສ້າງອາຄານໜຶ່ງຫຼັງໃຫ້ **ຂ**, ໃນການປະຕິບັດວຽກງານກໍ່ສ້າງນີ້ **ກ** ຕ້ອງໄດ້ເອົາໃຈໃສ່ກໍ່ສ້າງອາຄານນີ້ໃຫ້ຖືກຕ້ອງຕາມແຜນການກໍ່ສ້າງຂອງ **ຂ** ພ້ອມເຮັດໃຫ້ສອດຄ່ອງກັບເຕັກນິກ ຫຼື ຫຼັກວິຊາການຂອງການກໍ່ສ້າງອາຄານ ທຸກຢ່າງ, ນອກນັ້ນພາຍຫຼັງກໍ່ສ້າງສຳເລັດແລ້ວຜູ້ກ່ຽວຍັງຕ້ອງໄດ້ຮັບປະກັນ ຄຸນນະພາບຂອງການກໍ່ສ້າງຕາມທີ່ກຳນົດໄວ້ໃນກົດໝາຍສະເພາະ ສະນັ້ນ ຖ້າ ປະຕິບັດບໍ່ຖືກຕ້ອງຕາມເຕັກນິກຂອງການກໍ່ສ້າງ ຜູ້ກ່ຽວກໍຕ້ອງໄດ້ຮັບຜິດຊອບ ສ້ອມແປງຄືນ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງເນື້ອໃນມາດຕາ 76 ການຮັບປະກັນຄຸນນະພາບຂອງສິ່ງກໍ່ສ້າງ ຂອງກົດ ໝາຍว่าด้วยขั้ผูกพันใน ແລະ ນອກສັນຍາປີ 2008, ບໍ່ຄົບຖ້ວນ ແລະ ຮັດກຸມ ສະນັ້ນ ຈຶ່ງຕ້ອງໄດ້ປັບປຸງຄື ຜູ້ຮັບເໝົາ ຕ້ອງຮັບປະກັນສິ່ງກໍ່ສ້າງ ໃຫ້ຖືກຕ້ອງຕາມມາດຕະຖານເຕັກນິກຂອງການກໍ່ສ້າງແລະ ສອດຄ່ອງກັບ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງຂອງປະເທດອື່ນ	ມາດຕາ 559, 562 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ການຮັບປະກັນຄຸນນະພາບຂອງສິ່ງກໍ່ສ້າງແມ່ນຂຶ້ນກັບເປົ້າໝາຍຂອງການກໍ່ສ້າງ ໂດຍມີກົດໝາຍສະເພາະດັດປັບ ເຊັ່ນ ກໍ່ສ້າງຕຶກອາຄານ, ກໍ່ສ້າງຂົວ ທາງ ຫຼື ກໍ່ສ້າງເຂື່ອນໄຟຟ້າ ຊຶ່ງ ຜູ້ຮັບເໝົາຕ້ອງປະຕິບັດໃຫ້ສອດຄ່ອງກັບກົດໝາຍທີ່ ກ່ຽວຂ້ອງສ່ວນມາດຕານີ້ພຽງແຕ່ກຳນົດຫຼັກການໃຫ້ ຜູ້ຮັບເໝົາປະຕິບັດພັນທະ ຂອງຕົນໃນການເຮັດວຽກກໍ່ສ້າງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ປ. ສັນຍາແຮງງານ

ມາດຕາ 457 ສັນຍາແຮງງານ

ສັນຍາແຮງງານ ແມ່ນ ການຕົກລົງລະຫວ່າງຜູ້ໃຊ້ແຮງງານ ແລະ ຜູ້ອອກແຮງງານ, ຊຶ່ງຜູ້ອອກແຮງງານ ຕ້ອງໄດ້ປະຕິບັດວຽກງານຕາມເງື່ອນໄຂການເຮັດວຽກ, ສ່ວນຜູ້ໃຊ້ແຮງງານຕ້ອງຈ່າຍເງິນເດືອນ ຫຼື ຄ່າແຮງງານ, ສະຫວັດດີການ ແລະ ນະໂຍບາຍອື່ນ ໃຫ້ແກ່ຜູ້ອອກແຮງງານ ຕາມຈຳນວນ ແລະ ກຳນົດເວລາທີ່ໄດ້ຕົກລົງກັນ ໃນສັນຍາແຮງງານ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ກ່ຽວກັບ ຄວາມໝາຍຂອງສັນຍາແຮງງານ, ຂອບເຂດຄວາມ ຮັບຜິດຊອບ, ສິດ ແລະ ຜົນປະໂຫຍດ ຂອງຄູ່ສັນຍາ.
ຕົວຢ່າງ	ບໍລິສັດ **ກ** ໄດ້ຈ້າງ **ຂ** ມາເປັນທີ່ປຶກສາທາງດ້ານກົດໝາຍ ໂດຍຕົກລົງໃຫ້ເງິນ ເດືອນ 10.000.000 ກີບຕໍ່ເດືອນ.

ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກມາດຕາ 75 ກົດໝາຍວ່າດ້ວຍແຮງງານ ຢາກໃຫ້ຮູ້ວ່າສັນຍາແຮງງານແມ່ນສັນຍາປະເພດໜຶ່ງ ເປັນພື້ນຖານທາງແພ່ງ ແລະ ເກີດຂຶ້ນຫຼາຍໃນສັງຄົມປັດຈຸບັນ ສະນັ້ນ ການກຳນົດໃນປະມວນກົດໝາຍແພ່ງ ຈະສາມາດເບິ່ງໄດ້ແຈ້ງເລີຍວ່າ ໃນບັນດາສັນຍາຕ່າງໆ ມີປະເພດສັນຍາໃດແດ່ ເພື່ອສະດວກແກ່ຜູ້ນຳໃຊ້.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 623 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 75 ຂອງກົດໝາຍວ່າດ້ວຍແຮງງານ ປີ 2013.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 458 ສິດ ແລະ ພັນທະ ຂອງຜູ້ໃຊ້ແຮງງານ

ຜູ້ໃຊ້ແຮງງານ ມີສິດ ດັ່ງນີ້:

1. ທົດສອບຄວາມສາມາດຂອງຜູ້ອອກແຮງງານ;
2. ທວງໃຫ້ຜູ້ອອກແຮງງານມາເຮັດວຽກຕາມທີ່ໄດ້ຕົກລົງກັນໃນສັນຍາ;
3. ຍົກເລີກສັນຍາແຮງງານ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍແຮງງານ.
4. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ຜູ້ໃຊ້ແຮງງານ ມີພັນທະ ດັ່ງນີ້:

1. ຈ່ຍເງິນເດືອນ ຫຼື ຄ່າແຮງງານ, ສະຫວັດດີການ ແລະ ນະ�โยบายອື່ນ ຕາມສັນຍາແຮງງານ ແລະ/ຫຼື ກົດໝາຍ;
2. ຄຸ້ມຄອງດູແລ, ຮັບປະກັນຄວາມປອດໄພ ຕະຫຼອດໄລຍະເວລາເຮັດວຽກຂອງຜູ້ອອກແຮງງານ;
3. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ກ່ຽວກັບ ສິດ ແລະ ພັນທະຂອງຜູ້ໃຊ້ແຮງງານ.
ຕົວຢ່າງ	ບໍລິສັດ **ກ** ໄດ້ຈ້າງ **ຂ** ມາເປັນທີ່ປຶກສາທາງດ້ານກົດໝາຍ ໂດຍຕົກລົງຈ່ຍໃຫ້ເງິນເດືອນ 10.000.000 ກີບຕໍ່ເດືອນ. ໃນກໍລະນີນີ້ ບໍລິສັດ **ກ** ມີ ພັນທະຈ່ຍເງິນເດືອນ ໃຫ້ **ຂ** ໃນຈຳນວນ 10.000.000 ກີບ ຕາມທີ່ຕົກລົງກັນ ແລະ ບໍລິສັດ **ກ** ມີສິດທວງໃຫ້ **ຂ** ມາເຮັດວຽກຕາມທີ່ໄດ້ຕົກລົງໃນສັນຍາ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກມາດຕາ 82-95 ກົດໝາຍວ່າດ້ວຍແຮງງານ ຢາກໃຫ້ຮູ້ວ່າສັນຍາແຮງງານແມ່ນສັນຍາປະເພດໜຶ່ງ ແລະ ເປັນບັນຫາພື້ນຖານທາງແພ່ງ. ສະນັ້ນ, ຈຶ່ງໄດ້ກຳນົດສິດ ແລະ ພັນທະຂອງຜູ້ໃຊ້ແຮງງານອັນລວມໆໄວ້ໃນປະມວນກົດໝາຍແພ່ງ ສ່ວນສິດ ແລະ ພັນທະລະອຽດແມ່ນໄດ້ກຳນົດໃນກົດໝາຍສະເພາະ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 75 ຂອງກົດໝາຍວ່າດ້ວຍແຮງງານ ປີ 2013; ມາດຕາ 82-95 ຂອງກົດໝາຍວ່າດ້ວຍແຮງງານ ປີ 2013.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 459 ສິດ ແລະ ພັນທະ ຂອງຜູ້ອອກແຮງງານ

ຜູ້ອອກແຮງງານ ມີສິດ ດັ່ງນີ້:

1. ໄດ້ຮັບເງິນເດືອນ ຫຼື ຄ່າແຮງງານ, ສະຫວັດດີການ ແລະ ນະໂຍບາຍອື່ນ ຕາມສັນຍາແຮງງານ ແລະ/ຫຼື ກົດໝາຍ;
2. ໄດ້ຮັບການພັກຜ່ອນ, ການເບິ່ງແຍງສຸຂະພາບ ແລະ ຄວາມປອດໄພໃນການອອກແຮງງານ, ຮ້ອງຂໍຕໍ່ວ່າ ແລະ ອື່ນໆ;
3. ຍົກເລີກສັນຍາແຮງງານ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍແຮງງານ;
4. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ຜູ້ອອກແຮງງານ ມີພັນທະ ດັ່ງນີ້:

1. ອອກແຮງງານ ຕາມທີ່ໄດ້ຕົກລົງກັນໃນສັນຍາແຮງງານ;
2. ປະຕິບັດໜ້າທີ່ດ້ວຍຄວາມຮັບຜິດຊອບ ແລະ ສັດຊື່;
3. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ຢ່າງກ່ຽວກັບ ສິດ ແລະ ພັນທະຂອງຜູ້ອອກແຮງງານ.
ຕົວຢ່າງ	ບໍລິສັດ **ກ** ໄດ້ຈ້າງ **ຂ** ມາເປັນທີ່ປຶກສາທາງດ້ານກົດໝາຍ ໂດຍຕົກລົງຈ່າຍໃຫ້ເງິນເດືອນ 10.000.000 ກີບຕໍ່ເດືອນ. ໃນກໍລະນີນີ້ **ຂ** ມີສິດ ຮັບເງິນເດືອນ ຈຳນວນ 10.000.000 ກີບ ແລະ ມີພັນທະ ປະຕິບັດວຽກງານ ຕາມທີ່ຕົກລົງກັນໄວ້.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກມາດຕາ 82-95 ກົດໝາຍວ່າດ້ວຍແຮງງານ ຢາກໃຫ້ຮູ້ວ່າສັນຍາແຮງງານແມ່ນສັນຍາປະເພດໜຶ່ງ ແລະ ເປັນບັນຫາພື້ນຖານທາງແພ່ງ. ສະນັ້ນ, ຈຶ່ງໄດ້ກຳນົດສິດ ແລະ ພັນທະຂອງຜູ້ອອກແຮງງານອັນລວມໆໄວ້ໃນປະມວນກົດໝາຍແພ່ງ ສ່ວນສິດ ແລະ ພັນທະລະອຽດແມ່ນໄດ້ກຳນົດໃນກົດໝາຍສະເພາະ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 75 ກົດໝາຍວ່າດ້ວຍແຮງງານ ປີ 2013; ມາດຕາ 82-95 ກົດໝາຍວ່າດ້ວຍແຮງງານ ປີ 2013.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ຜ. ສັນຍາຂົນສົ່ງ

ມາດຕາ 460 ສັນຍາຂົນສົ່ງ

ສັນຍາຂົນສົ່ງ ແມ່ນ ການຕົກລົງຂອງຄູ່ສັນຍາ, ຊຶ່ງຝ່າຍໜຶ່ງແມ່ນຜູ້ຂົນສົ່ງ ເປັນຜູ້ຮັບຜິດຊອບນຳສົ່ງຜູ້ໂດຍສານ, ເຄື່ອງຕິດຕົວ ຫຼື ວັດຖຸສິ່ງຂອງ, ສິນຄ້າ, ເອກະສານ ແລະ ອື່ນໆ ໄປຮອດຈຸດໝາຍ ຫຼື ຕາມຈຸດ ປະສົງຂອງອີກຝ່າຍໜຶ່ງ, ສ່ວນອີກຝ່າຍໜຶ່ງແມ່ນຜູ້ໂດຍສານ ຫຼື ຜູ້ສົ່ງວັດຖຸສິ່ງຂອງ ຫຼື ສິນຄ້າເປັນຜູ້ມີພັນ ທະຈ່າຍຄ່າໂດຍສານ ຫຼື ຄ່າຂົນສົ່ງຕາມລາຄາທີ່ຕົກລົງກັນ.

ສັນຍາຂົນສົ່ງ ມີຜົນສັກສິດນັບແຕ່ເວລາຜູ້ຂົນສົ່ງຮັບເອົາຜູ້ໂດຍສານ, ເຄື່ອງຕິດຕົວ ຫຼື ວັດຖຸສິ່ງຂອງ, ສິນຄ້າ ແລະ ສິ້ນສຸດລົງໃນເວລາຜູ້ໂດຍສານຮອດຈຸດໝາຍພ້ອມດ້ວຍເຄື່ອງຕິດຕົວ ຫຼື ເຈົ້າຂອງ ຫຼື ຜູ້ມີສິດໄດ້ຮັບເອົາວັດຖຸສິ່ງຂອງ ຫຼື ສິນຄ້າດັ່ງກ່າວແລ້ວ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ກ່ຽວກັບ ນິຍາມຂອງສັນຍາຂົນສົ່ງ ແລະ ຄວາມຮັບຜິດຊອບຂອງຄູ່ສັນຍາເອງ ເພື່ອພັດທະນາເສດຖະກິດໃນທ້ອງຕະຫຼາດເຮັດໃຫ້ການພົວພັນແລກປ່ຽນສິນຄ້າ ຄວາມຕ້ອງການໃນການເດີນທາງ ຄຽງຄູ່ກັນນັ້ນແມ່ນການພັດທະນາໃນຮູບການຂົນສົ່ງສິນຄ້າ, ຂົນສົ່ງຜູ້ໂດຍສານ.
ຕົວຢ່າງ	**ກ** ວ່າຈ້າງ ໃຫ້ **ຂ** ຂົນສົ່ງສິນຄ້າ ຈາກ ແຂວງ **ອ** ໄປຫາ ແຂວງ **ຣ** ພາຍໃນກຳນົດເວລາ 1 ວັນ, **ຂ** ຕ້ອງປະຕິບັດພັນທະໃຫ້ທັນຕາມກຳນົດເວລາ ແລະ **ກ** ຕ້ອງຈ່າຍຄ່າຕອບແທນຕາມການຕົກລົງກັນ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກມາດຕາ 77 ສັນຍາຂົນສົ່ງ ວັກ 1, 2 ຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ປີ 2008, ຍ້ອນສັນຍາຂົນສົ່ງແມ່ນສັນຍາທາງແພ່ງປະເພດໜຶ່ງ ທີ່ມັກນຳໃຊ້ທົ່ວໄປ ຊຶ່ງມີຄຸນລັກສະນະທີ່ສັບສົນ ແລະ ເປັນອັນຕະລາຍໃນຂະບວນການຂົນສົ່ງ ສະນັ້ນ ຈຶ່ງປັບປຸງເພື່ອໃຫ້ສອດຄ່ອງກັບສັງຄົມ ແລະ ໃຫ້ມີເນື້ອໃນຈະແຈ້ງ ສະດວກໃຫ້ແກ່ການນຳໃຊ້ຂອງສັງຄົມ
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 569-594 ຂອງປະມວນກົດໝາຍຍີ່ປຸ່ນ (ການຂົນສົ່ງສິນຄ້າ: ມາດຕາ 570-588, ການຂົນສົ່ງຜູ້ໂດຍສານ: ມາດຕາ 589-594).
ມາດຕາອ້າງອີງ	ມາດຕາ 23, 28 ຂອງກົດໝາຍວ່າດ້ວຍການຂົນສົ່ງທາງບົກ ປີ 2012.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 461 ປະເພດການຂົນສົ່ງ

ປະເພດ ການຂົນສົ່ງ ມີ ດັ່ງນີ້:

1. ການຂົນສົ່ງທາງບົກ ລວມທັງການຂົນສົ່ງທາງລົດໄຟ;
2. ການຂົນສົ່ງທາງນ້ຳ;
3. ການຂົນສົ່ງທາງອາກາດ;

ສຳລັບລະບຽບການ ແລະ ຮູບແບບການຂົນສົ່ງແຕ່ລະປະເພດ ໄດ້ກຳນົດໄວ້ໃນກົດໝາຍທີ່ກ່ຽວຂ້ອງ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ກ່ຽວກັບ ປະເພດຂອງສັນຍາຂົນສົ່ງ.
ຕົວຢ່າງ	**1. ໃນກໍລະນີນີ້ແມ່ນການຂົນສົ່ງທາງບົກ:** **ກ** ຈ້າງບໍລິສັດຂົນສົ່ງ **ຂ** ເພື່ອຂົນສົ່ງສິນຄ້າ ຈາກ ແຂວງ ອ ໄປ ແຂວງ ຣ ດ້ວຍລົດບັນທຸກ **2. ໃນກໍລະນີນີ້ແມ່ນການຂົນສົ່ງທາງນ້ຳ:** **ກ** ຢູ່ປະເທດ ສ ຝາກເຄື່ອງກິນຈັກໜັກໃຫ້ **ຂ** ຢູ່ປະເທດ ຊ ໂດຍຜ່ານເຮືອກຳປັ່ນ. **3. ໃນກໍລະນີນີ້ແມ່ນການຂົນສົ່ງທາງອາກາດ:** **ກ** ຢູ່ ແຂວງ ອ ຝາກເຄື່ອງໃຫ້ **ຂ** ຢູ່ ແຂວງ ຣ ຜ່ານ ວິສາຫະກິດ ຫ (ທາງເຮືອນບິນ)
ເຫດຜົນໃນການປັບປຸງ	ມາດຕານີ້ໄດ້ປັບປຸງມາຈາກມາດຕາ 77 ສັນຍາຂົນສົ່ງ ວັກ 3 ຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ປີ 2008, ຍ້ອນວ່າຢາກໃຫ້ເຫັນວ່າ ແຕ່ລະປະເພດການຂົນສົ່ງມີຄວາມແຕກຕ່າງກັນ ແລະ ເນື້ອໃນ ຫຼື ຂັ້ນຕອນລະອຽດຂອງການຂົນສົ່ງແຕ່ລະປະເພດ ໄດ້ກຳນົດໃນກົດໝາຍສະເພາະ.

ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 569 ຂອງປະມວນກົດໝາຍຍີ່ປຸ່ນ.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 462 ສິດ ແລະ ພັນທະຂອງຜູ້ຂົນສົ່ງ

ຜູ້ຂົນສົ່ງ ມີສິດ ດັ່ງນີ້:

1. ເກັບ, ທວງ ເອົາຄ່າ ໂດຍສານ, ເຄື່ອງຕິດຕົວ ຫຼື ວັດຖຸສິ່ງຂອງ, ສິນຄ້າ, ເອກະສານ ແລະ ອື່ນໆ ຕາມລາຄາທີ່ໄດ້ຕົກລົງກັນ ຫຼື ຕາມລະບຽບການ;
2. ບໍ່ຮັບ ຜູ້ໂດຍສານ ທີ່ຢູ່ໃນສະພາບເສຍຈິດທີ່ບໍ່ມີຜູ້ຄຸ້ມຄອງ, ເຄື່ອງຕິດຕົວ ຫຼື ວັດຖຸສິ່ງຂອງ, ສິນຄ້າ, ເອກະສານ ແລະ ອື່ນໆ ທີ່ເກືອດຫ້າມ ຫຼື ຜິດກົດໝາຍ;
3. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ຜູ້ຂົນສົ່ງ ມີພັນທະ ດັ່ງນີ້:

1. ຂົນສົ່ງຜູ້ໂດຍສານ, ເຄື່ອງຕິດຕົວ ຫຼື ວັດຖຸສິ່ງຂອງ, ສິນຄ້າ, ເອກະສານ ແລະ ອື່ນໆ ໄປ ຮອດຈຸດໝາຍຢ່າງປອດໄພຕາມກຳນົດເວລາ ແລະ ມອບໃຫ້ຜູ້ມີສິດຮັບເອົາວັດຖຸສິ່ງຂອງ ຫຼື ສິນຄ້າດັ່ງກ່າວ ຕາມຈຳນວນ ແລະ ຄຸນນະພາບທີ່ຕົນໄດ້ຮັບຢູ່ຕົ້ນທາງ;
2. ໃນກໍລະນີເກີດອຸບປະຕິເຫດ ຜູ້ຂົນສົ່ງຕ້ອງຮັບຜິດຊອບຕໍ່ຜູ້ໂດຍສານທີ່ໄດ້ຮັບບາດເຈັບ ຫຼື ເສຍຊີວິດ, ຮັບຜິດຊອບຕໍ່ ເຄື່ອງຕິດຕົວ ຫຼື ວັດຖຸສິ່ງຂອງ, ສິນຄ້າ, ເອກະສານ ແລະ ອື່ນໆ ທີ່ໄດ້ເສຍຫາຍ ຫຼື ເປ່ເພ ຈາກການຂົນສົ່ງ, ເວັ້ນເສຍແຕ່ກໍລະນີເຫດສຸດວິໄສ;
3. ສົ່ງຜູ້ໂດຍສານໄປຍັງສະຖານທີ່ປົ່ນປົວ ໃກ້ທີ່ສຸດຢ່າງຮີບດ່ວນ ໃນກໍລະນີຜູ້ໂດຍສານເກີດ ເຈັບ ເປັນກະທັນຫັນ ຫຼື ຈະອອກລູກ;
4. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ຢ່າງກ່ຽວກັບ ສິດ ແລະ ພັນທະຂອງຜູ້ຂົນສົ່ງ.
ຕົວຢ່າງ	**1. ພັນທະຂອງຜູ້ຂົນສົ່ງ:** ລົດຂົນສົ່ງຜູ້ໂດຍສານ ຈາກແຂວງ ກ ຫາ ແຂວງ ຂ ໃນຂະນະເດີນທາງ ນັ້ນ ລົດຕົນແຕກ ເສຍຫຼັກ ຕົກຮ່ອງ ກ່ອນໄປເຖິງຈຸດໝາຍ ເຮັດໃຫ້ຜູ້ ໂດຍສານ 2 ຄົນໄດ້ຮັບບາດເຈັບສາຫັດ ແລະ ເຮັດໃຫ້ເຄື່ອງຝາກ ໄດ້ຮັບ ຄວາມເສຍຫາຍ ໃນກໍລະນີດັ່ງກ່າວ ຜູ້ຂົນສົ່ງຕ້ອງໄດ້ຮັບຜິດຊອບຕໍ່ຄວາມ ເສຍຫາຍທີ່ເກີດຂຶ້ນ. **2. ສິດຂອງຜູ້ຂົນສົ່ງ:** **ກ** ຈ້າງບໍລິສັດຂົນສົ່ງ **ຂ** ເພື່ອຂົນສົ່ງສິນຄ້າ ໃນລາຄາ 1.000.000 ກີບ ຈາກແຂວງ ຄ ໄປ ແຂວງ ງ ດ້ວຍລົດບັນທຸກ ແລະ **ຂ** ມີສິດທວງເອົາຄ່າ ຂົນສົ່ງຕາມການຕົກລົງກັນ.
ເຫດຜົນໃນການປັບປຸງ	ມາດຕານີ້ໄດ້ປັບປຸງມາຈາກມາດຕາ 78 ພັນທະຂອງຜູ້ຂົນສົ່ງ ຂອງກົດໝາຍວ່າ ດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ປີ 2008, ຍ້ອນວ່າ ການຂົນສົ່ງ ເປັນບັນຫາພື້ນຖານທາງແພ່ງ ສະນັ້ນ ຈຶ່ງໄດ້ປັບປຸງໃຫ້ຈະແຈ້ງໂດຍລວມຂຶ້ນຕື່ມ ເພື່ອປົກປ້ອງສິດຜົນປະ�โยດຂອງຜູ້ຂົນສົ່ງ ຊຶ່ງ ສຳລັບການກຳນົດ ສິດ ແລະ ພັນທະລາຍລະອຽດຂອງຜູ້ຂົນສົ່ງ ແມ່ນຂຶ້ນກັບສັນຍາຂົນສົ່ງແຕ່ລະປະເພດຊຶ່ງ ໄດ້ກຳນົດໄວ້ໃນກົດໝາຍສະເພາະ ແລະ ລະບຽບການ.

ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 32 ຂອງກົດໝາຍວ່າດ້ວຍການຂົນສົ່ງທາງບົກ ປີ 2012; ມາດຕາ 11, 12 ແລະ 13 ຂອງກົດໝາຍວ່າດ້ວຍການຂົນສົ່ງຫຼາຍຮູບແບບ ປີ 2012.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 463 ສິດ ແລະ ພັນທະຂອງຜູ້ໂດຍສານ ຫຼື ເຈົ້າຂອງສິ່ງຂອງ ຫຼື ສິນຄ້າ

ຜູ້ໂດຍສານ ຫຼື ເຈົ້າຂອງສິ່ງຂອງ ຫຼື ສິນຄ້າ ມີສິດ ດັ່ງນີ້:

1. ໄປຮອດຈຸດໝາຍດ້ວຍຄວາມປອດໄພ ແລະ ຕາມກຳນົດເວລາທີ່ຕົກລົງກັນ;
2. ໄດ້ຮັບຂໍ້ມູນ ຂ່າວສານ, ຄວາມສະດວກ, ໃນການເດີນທາງ;
3. ທວງເອົາການໃຊ້ແທນຄ່າເສຍຫາຍທີ່ເກີດຂຶ້ນ ຈາກຄວາມຜິດ ຂອງຜູ້ດຳເນີນການຂົນສົ່ງ;
4. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ຜູ້ໂດຍສານ ຫຼື ເຈົ້າຂອງສິ່ງຂອງ ຫຼື ສິນຄ້າ ມີພັນທະ ດັ່ງນີ້:

1. ຈ່າຍຄ່າໂດຍສານ ຫຼື ຄ່າເຄື່ອງບັນທຸກ ຕາມລາຄາທີ່ໄດ້ຕົກລົງກັນ;
2. ຮັກສາຄວາມສະອາດ, ສິ່ງແວດລ້ອມ, ຄວາມສະຫງົບ, ມາລະຍາດ, ແຈ້ງສິ່ງຂອງທີ່ມີມູນຄ່າສູງ, ວັດຖຸອັນຕະລາຍ, ອາວຸດ ແລະ ຮັບຜິດຊອບຈ່າຍຄ່າສິ່ງຂອງທີ່ມີນ້ຳໜັກເກີນກຳນົດໃຫ້ແກ່ຜູ້ດຳເນີນການຂົນສົ່ງ ຕາມລະບຽບການໂດຍສານ;
3. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ກ່ຽວກັບ ສິດ ແລະ ພັນທະຂອງຜູ້ໂດຍສານ ຫຼື ເຈົ້າຂອງສິ່ງຂອງ ຫຼື ສິນຄ້າ.
ຕົວຢ່າງ	**1. ສິດຂອງຜູ້ໂດຍສານ ຫຼື ເຈົ້າຂອງສິ່ງຂອງ ຫຼື ສິນຄ້າ:** **ກ** ວ່າຈ້າງໃຫ້ **ຂ** ນຳສົ່ງ ໝາກຖົ່ວລຽນ ຈາກ ແຂວງ ຫ ໃຫ້ມາສົ່ງຮອດຮ້ານຂາຍໝາກໄມ້ຂອງ **ກ** ຢູ່ ແຂວງ ອ ໃນລະຍະການຂົນສົ່ງ ມາຮອດ ແຂວງ ຮ, **ຂ** ດື່ມສິ່ງມຶນເມົາ ເຮັດໃຫ້ເກີດອຸບປະຕິເຫດ ລົດຕົກຮ່ອງ ໝາກໄມ້ທີ່ບັນທຸກມາເກີດຄວາມເສຍຫາຍທັງໝົດ, ໃນກໍລະນີດັ່ງກ່າວ **ກ** ມີສິດທວງເອົາຄ່າໝາກໄມ້ທັງໝົດນຳ **ຂ** ຍ້ອນວ່າ **ຂ** ມີຄວາມຜິດທີ່ໄດ້ກໍ່ຄວາມເສຍຫາຍ. **2. ພັນທະຂອງຜູ້ໂດຍສານ ຫຼື ເຈົ້າຂອງສິ່ງຂອງ ຫຼື ສິນຄ້າ:** **ກ** ວ່າຈ້າງໃຫ້ **ຂ** ນຳສົ່ງ ໝາກຖົ່ວລຽນ ຈາກ ແຂວງ ອ ໃຫ້ມາສົ່ງຮອດຮ້ານຂາຍໝາກໄມ້ຂອງ **ກ** ຢູ່ ແຂວງ ຮ, **ກ** ມີພັນທະໃນການຈ່າຍເງິນໃຫ້ **ຂ** ຕາມລາຄາທີ່ໄດ້ຕົກລົງກັນ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ ຍ້ອນວ່າ ການຂົນສົ່ງເປັນບັນຫາພື້ນຖານທາງແພ່ງ ແລະ ໃນກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ປີ 2008, ບໍ່ໄດ້ກຳນົດລະອຽດ ສະນັ້ນ ຈຶ່ງໄດ້ປັບປຸງໃຫ້ຈະແຈ້ງຂຶ້ນຕື່ມ ເພື່ອປົກປ້ອງສິດຜົນປະ�โยດຂອງຜູ້ໂດຍສານ, ເຈົ້າຂອງສິ່ງຂອງ ຫຼື ເຈົ້າຂອງສິນຄ້າ

	ສຳລັບການກຳນົດ ສິດ ແລະ ພັນທະລາຍລະອຽດຂອງຜູ້ໂດຍສານ, ເຈົ້າຂອງສິ່ງຂອງ ຫຼື ສິນຄ້າ ແມ່ນຂຶ້ນກັບສັນຍາຂົນສົ່ງແຕ່ລະປະເພດ ຊຶ່ງໄດ້ກຳນົດໄວ້ໃນກົດໝາຍສະເພາະ ແລະ ລະບຽບການ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 27 ຂອງກົດໝາຍວ່າດ້ວຍການຂົນສົ່ງທາງບົກ ປີ 2012; ມາດຕາ 19, 20, 21 ຂອງກົດໝາຍວ່າດ້ວຍການຂົນສົ່ງຫຼາຍຮູບແບບ ປີ 2012.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 464 ຄ່າໂດຍສານ ຫຼື ຄ່າຂົນສົ່ງ

ຜູ້ໂດຍສານຈະຈ່າຍຄ່າໂດຍສານກ່ອນ ຫຼື ຫຼັງການເດີນທາງກໍໄດ້ ຕາມລາຄາສາຍທາງທີ່ລັດໄດ້ກຳນົດໃນແຕ່ລະໄລຍະ ຫຼື ຕາມການຕົກລົງຂອງຄູ່ສັນຍາ.

ເຈົ້າຂອງສິ່ງຂອງ ຫຼື ເຈົ້າຂອງສິນຄ້າ ຈະຈ່າຍຄ່າຂົນສົ່ງກ່ອນ ຫຼື ຫຼັງການຂົນສົ່ງກໍໄດ້ ຕາມທີ່ໄດ້ຕົກລົງກັນ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ກ່ຽວກັບ ຮູບແບບໃນການຊຳລະຄ່າໂດຍສານ ຫຼື ຄ່າຂົນສົ່ງ
ຕົວຢ່າງ	**1. ໃນກໍລະນີນີ້ ໃຊ້ຮູບແບບການສຳລະກ່ອນການເດີນທາງ:** **ກ** ມີຈຸດປະສົງຈະເດີນທາງຈາກ ແຂວງ ຫ ເພື່ອໄປທ່ຽວຊົມເມືອງ ຮ ໃນວັນທີ 14-16 ເມສາ 2017 ຊຶ່ງ **ກ** ໄດ້ຕົກລົງຈ່າຍເງິນຊື້ປີ້ຍົນໄປ-ກັບ ຈາກ ແຂວງ ຫ ຫາ ແຂວງ ອ ໃນວັນທີ 10 ເມສາ 2016 ໃນຈຳນວນ 1.400.000 ກີບ ໃຫ້ກັບບໍລິສັດ **ຂ**. **2. ໃນຕົວຢ່າງນີ້ ໃຊ້ຮູບແບບການສຳລະຫຼັງການຂົນສົ່ງ:** **ກ** ຢູ່ ແຂວງ ສ ຝາກເອກະສານນຳລົດເມ ເພື່ອສົ່ງໃຫ້ **ຂ** ຢູ່ ແຂວງ **ຊ**, **ກ** ແລະ ເຈົ້າຂອງລົດໄດ້ຕົກລົງຄ່າຝາກເອກະສານໃນລາຄາ 50.000 ກີບ ຊຶ່ງ **ກ** ໄດ້ແຈ້ງໃຫ້ເຈົ້າຂອງລົດ ເກັບເງິນຄ່າຝາກເອກະສານດັ່ງກ່າວຈາກ **ຂ** ໃນເວລາທີ່ **ຂ** ໄປຮັບເອົາເຄື່ອງ.
ເຫດຜົນໃນການປັບປຸງ	ມາດຕານີ້ໄດ້ປັບປຸງມາຈາກມາດຕາ 79 ຄ່າໂດນສານ ແລະ ຄ່າຂົນສົ່ງ ຂອງກົດ ໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ປີ 2008, ຍ້ອນວ່າ ທຸກການເຄື່ອນໄຫວ, ການເດີນທາງ, ການຂົນສົ່ງ ການສຳລະຄ່າຕ່າງໆ ນັ້ນ ແມ່ນສາມາດສຳລະກ່ອນ ຫຼື ຫຼັງ ກໍໄດ້ ຂຶ້ນກັບການຕົກລົງຂອງຄູ່ສັນຍາ ແລະ ປັບປຸງຄຳສັບ ຈາກ "**ວັດຖຸເຄື່ອງຂອງ**" ມາເປັນ "**ສິ່ງຂອງ**".
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ຝ. ສັນຍາປະກັນໄພ

ມາດຕາ 465 ສັນຍາປະກັນໄພ

ສັນຍາປະກັນໄພ ແມ່ນ ການຕົກລົງລະຫວ່າງ ຜູ້ຊື້ປະກັນໄພ ກັບຜູ້ປະກັນໄພ, ຊຶ່ງຜູ້ຊື້ປະກັນໄພຕ້ອງໄດ້ຈ່າຍຄ່າທຳນຽມປະກັນໄພ ແລະ ຜູ້ປະກັນໄພຕ້ອງຈ່າຍສິນທິດແທນປະກັນໄພ ຫຼື ທົດແທນຄ່າເສຍຫາຍ ໃຫ້ ຜູ້ຊື້ປະກັນໄພ ຫຼື ຜູ້ໄດ້ຮັບຜົນປະ�โຫຍດຈາກການປະກັນໄພ ໃນກໍລະນີມີເຫດໃດໜຶ່ງຕາມທີ່ໄດ້ກຳນົດໃນສັນຍາ.

ສັນຍາປະກັນໄພແຕ່ລະປະເພດ ທີ່ມີເປົ້າໝາຍປະກັນໄພ ຢູ່ ສປປ ລາວ ຕ້ອງເຮັດກັບຜູ້ປະກັນໄພ ທີ່ໄດ້ຮັບອະນຸຍາດສ້າງຕັ້ງ ແລະ ດຳເນີນທຸລະກິດ ຢູ່ ສປປ ລາວ ເທົ່ານັ້ນ.

ສັນຍາປະກັນໄພ ຕ້ອງເຮັດເປັນລາຍລັກອັກສອນ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ກ່ຽວກັບ ນິຍາມຂອງສັນຍາປະກັນໄພ ແລະ ກຳນົດສິດ ແລະ ພັນທະພື້ນຖານຂອງ ສັນຍາປະກັນໄພ. ພ້ອມທັງເຮັດໃຫ້ເຫັນ ເຖິງຄວາມຈຳເປັນຂອງເງື່ອນ ໄຂຂອງຜູ້ປະກັນໄພ, ແລະ ໃຫ້ຮູ້ວ່າ ສັນຍາປະກັນໄພ ຕ້ອງເຮັດເປັນລາຍລັກອັກ ສອນ.
ຕົວຢ່າງ	**ກ** ເຮັດສັນຍາປະກັນໄພລົດ ກັບບໍລິສັດ ປະກັນໄພ ໃນຈຳນວນເງິນ 350.000 ກີບ ຕໍ່ປີ ເພື່ອຮັບປະກັນການເກີດອຸບປະຕິເຫດຂອງລົດ ຕໍ່ບຸກຄົນທີສາມ ຊຶ່ງ **ກ** (ຜູ້ຊື້ປະກັນໄພ) ຕ້ອງໄດ້ຈ່າຍຄ່າທຳນຽມ ແລະ ບໍລິສັດປະກັນໄພ **ຂ** (ຜູ້ປະກັນໄພ) ຕ້ອງໄດ້ຈ່າຍສິນທິດແທນຄ່າເສຍຫາຍ ໃຫ້ແກ່ບຸກຄົນທີສາມ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກມາດຕາ 37 ກົດໝາຍວ່າດ້ວຍການປະກັນໄພ ປີ 2011 ຢາກໃຫ້ຮູ້ວ່າສັນຍາປະກັນໄພແມ່ນສັນຍາປະເພດໜຶ່ງ ຊຶ່ງມີລັກສະນະທີ່ເປັນພື້ນຖານທາງແພ່ງ ສະນັ້ນ ການກຳນົດໃນປະມວນກົດໝາຍແພ່ງ ຈະສາມາດເບິ່ງໄດ້ແຈ້ງເລີຍວ່າ ໃນບັນດາສັນຍາຕ່າງໆ ມີປະເພດສັນຍາໃດແດ່ ເພື່ອສະດວກແກ່ຜູ້ນຳໃຊ້.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 567 ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2005.
ມາດຕາອ້າງອີງ	ມາດຕາ 37 ຂອງກົດໝາຍວ່າດ້ວຍປະກັນໄພ ປີ 2011; ມາດຕາ 369 ຂອງປະມວນກົດໝາຍແພ່ງ ປີ 2019.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 466 ປະເພດສັນຍາປະກັນໄພ

ປະເພດສັນຍາປະກັນໄພ ມີ ດັ່ງນີ້:

1. ສັນຍາປະກັນໄພສ່ວນບຸກຄົນ;
2. ສັນຍາປະກັນໄພຊັບສິ່ງຂອງ;
3. ສັນຍາປະກັນໄພຄວາມຮັບຜິດຊອບທາງແພ່ງ.

ສຳລັບສັນຍາປະກັນໄພແຕ່ລະປະເພດ ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ກ່ຽວກັບ ປະເພດ ຂອງສັນຍາປະກັນໄພ, ພ້ອມທັງ ເຮັດໃຫ້ຮູ້ວ່າມີກົດໝາຍ ແລະ ລະບຽບການສະເພາະ ທີ່ກຳນົດກ່ຽວກັບສັນຍາປະກັນໄພ.

ຕົວຢ່າງ	**1.** ສາມາດເບິ່ງຕົວຢ່າງຂອງມາດຕາ 465 ຂອງປະມວນກົດໝາຍແພ່ງ.
	2. ກ ເຮັດສັນຍາປະກັນໄພເຮືອນ ກັບບໍລິສັດປະກັນໄພ **ຂ** ໃນຈຳນວນເງິນ 30.000.000 ກີບ ຕໍ່ປີ ເພື່ອຮັບປະກັນການເກີດອັກຄີໄພ ຊຶ່ງ **ກ** (ຜູ້ຊື້ປະກັນໄພ) ຕ້ອງໄດ້ຈ່າຍຄ່າທຳນຽມ ແລະ ບໍລິສັດປະກັນໄພ **ຂ** (ຜູ້ປະກັນໄພ) ຕ້ອງໄດ້ຈ່າຍສິນທິດແທນຄ່າເສຍຫາຍ ຕາມການຕົກລົງ.
ເຫດຜົນໃນການປັບປຸງ	ໃຫ້ເຫັນວ່າ ແຕ່ລະປະເພດຂອງສັນຍາປະກັນໄພມີຄວາມແຕກຕ່າງກັນ ແລະ ໄດ້ກຳນົດໃນກົດໝາຍສະເພາະ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 568 ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2005; ກົດໝາຍປະກັນໄພຍີ່ປຸ່ນ (ປະກາດໃຊ້ ໃນວັນທີ 6 ມີຖຸນາ 2008, ມີຜົນສັກສິດ ໃນວັນທີ 1 ເມສາ 2010).
ມາດຕາອ້າງອີງ	ມາດຕາ 37 ຂອງກົດໝາຍວ່າດ້ວຍປະກັນໄພ ປີ 2011.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ພ. ສັນຍາຮຸ້ນສ່ວນ

ມາດຕາ 467 ສັນຍາຮຸ້ນສ່ວນ

ສັນຍາຮຸ້ນສ່ວນ ແມ່ນ ການຕົກລົງລະຫວ່າງ ສອງຄົນ ຫຼື ຫຼາຍຄົນ ເພື່ອເອົາເງິນ ຫຼື ຊັບສິ່ງຂອງ ຫຼື ແຮງງານມາຮ່ວມກັນດຳເນີນກິດຈະການໃດໜຶ່ງ ເພື່ອແບ່ງປັນຜົນປະໂຫຍດ ຫຼື ຮັບຜິດຊອບຕໍ່ໜີ້ສິນ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ກ່ຽວກັບ ນິຍາມຂອງສັນຍາຮຸ້ນສ່ວນ, ພ້ອມທັງ ກຳນົດສິດ ແລະ ພັນທະພື້ນຖານຂອງສັນຍາຮຸ້ນສ່ວນ.
ຕົວຢ່າງ	**ກ, ຂ, ຄ** ເຮັດສັນຍາຮຸ້ນສ່ວນພ້ອມກັນສ້າງຕັ້ງບໍລິສັດທ່ອງທ່ຽວຈຳກັດຂຶ້ນ ໂດຍທີ່ **ກ** ປະກອບສ່ວນເປັນ ທີ່ດິນໃນການສ້າງຕັ້ງບໍລິສັດ, **ຂ** ປະກອບສ່ວນງົບປະມານໃນການກໍ່ສ້າງບໍລິສັດ, ສ່ວນ **ຄ** ມີໜ້າທີ່ໃນການຊອກຫາແຮງງານເພື່ອຜະລິດ ສະນັ້ນ ຈຶ່ງເວົ້າໄດ້ວ່າ ຂາຮຸ້ນຈະມີສັນຍາຮ່ວມກັນ ເຊັ່ນ **ກ** ມີສັນຍາກັບ **ຂ, ກ** ມີສັນຍາກັບ **ຄ** ສ່ວນ **ຂ** ກໍ່ມີສັນຍາກັບ **ກ** ແລະ **ຄ**, ສ່ວນ **ຄ** ກໍມີສັນຍາກັບ **ກ** ແລະ **ຂ** ເຊັ່ນດຽວກັນ.
ເຫດຜົນໃນການປັບປຸງ	ມາດຕານີ້ໄດ້ປັບປຸງມາຈາກມາດຕາ 80 ສັນຍາຮຸ້ນສ່ວນ ຂອງກົດໝາຍວ່າດ້ວຍ ຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ປີ 2008, ເພື່ອໃຫ້ນິຍາມຂອງສັນຍາຮຸ້ນສ່ວນມີຄວາມຈະແຈ້ງຂຶ້ນ ສະດວກໃນການນຳໃຊ້
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 667 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 468 ການສິ້ນສຸດຂອງສັນຍາຮຸ້ນສ່ວນ

ສັນຍາຮຸ້ນສ່ວນ ຈະສິ້ນສຸດຕາມກໍລະນີໃດໜຶ່ງທີ່ກຳນົດໄວ້ໃນມາດຕາ 400 ຂອງປະມວນກົດໝາຍສະບັບນີ້ ຫຼື ສິ້ນສຸດໃນກໍລະນີໃດໜຶ່ງ ດັ່ງນີ້:

1. ກຳນົດເວລາຂອງສັນຍາຮຸ້ນສ່ວນ ໄດ້ສິ້ນສຸດລົງ;
2. ຄູ່ສັນຍາຮຸ້ນສ່ວນຝ່າຍໃດໜຶ່ງ ລົ້ມລະລາຍ ຫຼື ຂາດຄວາມສາມາດທາງດ້ານການປະພຶດ, ເວັ້ນເສຍແຕ່ຫາກໄດ້ຕົກລົງກັນໄວ້ເປັນຢ່າງອື່ນ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ກ່ຽວກັບ ການສິ້ນສຸດຂອງສັນຍາຮຸ້ນສ່ວນ
ຕົວຢ່າງ	ບໍລິສັດ **ກ**, ບໍລິສັດ **ຂ**, ບໍລິສັດ **ຄ** ເຮັດສັນຍາຮຸ້ນສ່ວນ ພ້ອມກັນສ້າງຕັ້ງບໍລິສັດທ່ອງທ່ຽວຈຳກັດຂຶ້ນ ໂດຍທີ່ **ກ** ປະກອບສ່ວນເປັນ ທີ່ດິນໃນການສ້າງຕັ້ງບໍລິສັດ, **ຂ** ປະກອບສ່ວນງົບປະມານໃນການກໍ່ສ້າງບໍລິສັດ ສ່ວນ **ຄ** ມີໜ້າທີ່ໃນການຊອກຫາແຮງງານເພື່ອຜະລິດ ສະນັ້ນ ຈຶ່ງເວົ້າໄດ້ວ່າ ຂາຮຸ້ນຈະມີສັນຍາຮ່ວມກັນ ເຊັ່ນ **ກ** ມີສັນຍາ ກັບ **ຂ, ກ** ມີສັນຍາກັບ **ຄ** ສ່ວນ **ຂ** ກໍ່ມີສັນຍາກັບ **ກ** ແລະ **ຄ,** ສ່ວນ **ຄ** ກໍມີສັນຍາກັບ **ກ** ແລະ **ຂ** ເຊັ່ນດຽວກັນ. ໃນກໍລະນີທີ່ **ກ** ຫາກບໍ່ສາມາດດຳເນີນທຸລະກິດໄດ້ ໂດຍຖືກສານຕັດສິນວ່າເປັນບໍລິສັດລົ້ມລະລາຍ ສັນຍາຮຸ້ນສ່ວນລະຫວ່າງ ບໍລິສັດ **ກ, ຂ, ຄ** ຈະຖືກສິ້ນສຸດລົງ.
ເຫດຜົນໃນການປັບປຸງ	ມາດຕານີ້ໄດ້ປັບປຸງມາຈາກມາດຕາ 81 ການສິ້ນສຸດຂອງສັນຍາຮຸ້ນສ່ວນ ຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ປີ 2008, ຍ້ອນວ່າໂດຍທົ່ວໄປແລ້ວ ການສິ້ນສຸດຂອງສັນຍາແມ່ນໃຫ້ປະຕິບັດຕາມຫຼັກການ ລວມ ແຕ່ສັນຍາຮຸ້ນສ່ວນເປັນສັນຍາທີ່ມີລັກສະນະພິເສດທາງເສດຖະກິດ ສະນັ້ນ ການສິ້ນສຸດຈຶ່ງມີການກຳນົດລັກສະນະສະເພາະໄວ້.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 682 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 469 ການແບ່ງປັນຜົນປະໂຫຍດ ຫຼື ຄວາມຮັບຜິດຊອບຕໍ່ໜີ້ສິນ

ເມື່ອສັນຍາຮຸ້ນສ່ວນ ຫາກໄດ້ສິ້ນສຸດລົງ ຖ້າບໍ່ມີການຕົກລົງຕ່າງຫາກຢູ່ໃນສັນຍາແລ້ວ, ການແບ່ງປັນຜົນປະໂຫຍດ ຫຼື ຄວາມຮັບຜິດຊອບຕໍ່ໜີ້ສິນ ໃຫ້ອີງຕາມພູດຂອງແຕ່ລະຄົນ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ຢ່າງກ່ຽວກັບ ວິທີການແບ່ງປັນຜົນປະໂຫຍດ ຫຼື ຄວາມຮັບຜິດຊອບຕໍ່ໜີ້ສິນ.
ຕົວຢ່າງ	ບໍລິສັດ **ກ** ກໍ່ສ້າງຈຳກັດ ມີທຶນຈົດທະບຽນການກໍ່ສ້າງ ຈຳນວນ 400.000.000 ກີບ ໃນນັ້ນມີຜູ້ປະກອບທຶນ **ກ** 200.000.000 ກີບ ຖືຮຸ້ນ 50 %, ສ່ວນ **ຂ** ປະກອບທຶນ 100.000.000 ກີບ ຖືຮຸ້ນ 25%, ແລະ **ຄ** ປະກອບທຶນ 100.000.000 ກີບ ຖືຮຸ້ນ 25% ເມື່ອເວລາແບ່ງປັນຜົນປະໂຫຍດແມ່ນແບ່ງຕາມ ຮຸ້ນ, ພູດ ທີ່ແຕ່ລະຄົນຖື ຄື **ກ** ມີສິດຮັບຜົນກຳໄລ 50% ຈາກຜົນກຳໄລທັງໝົດ, ສ່ວນ **ຂ** ແລະ **ຄ** ມີສິດໄດ້ຮັບສ່ວນແບ່ງຜົນກຳໄລຜູ້ລະ 25% ຈາກຜົນກຳໄລທັງໝົດ.
ເຫດຜົນໃນການປັບປຸງ	ມາດຕານີ້ໄດ້ປັບປຸງມາຈາກມາດຕາ 82 ການແບ່ງຜົນປະໂຫຍດ ຫຼື ຄວາມຮັບຜິດຊອບຕໍ່ໜີ້ສິນ ຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ປີ 2008, ຊຶ່ງໄດ້ປ່ຽນຄຳສັບວ່າ ຮຸ້ນ ເປັນພູດ ເພື່ອເປັນຄຳສັບທີ່ໃຊ້ເປັນເອກະພາບ ແລະ ໃຫ້ມີຄວາມໝາຍຈະແຈ້ງ ແລະ ເຂົ້າໃຈງ່າຍ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 674 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ບົດອະທິບາຍປະມວນກົດໝາຍແພ່ງ

ພາກທີ VI ຂໍ້ຜູກພັນນອກສັນຍາ
(ມາດຕາ 470-509)

ພາກທີ VI
ຂໍ້ຜູກພັນນອກສັນຍາ

ໝວດທີ 1
ຫຼັກການທົ່ວໄປ

ມາດຕາ 470 ຂໍ້ຜູກພັນນອກສັນຍາ

ຂໍ້ຜູກພັນນອກສັນຍາ ແມ່ນ ສາຍພົວພັນທາງແພ່ງ ທີ່ເກີດຂຶ້ນໂດຍບໍ່ມີສັນຍານຳກັນ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນສາຍພົວພັນທາງແພ່ງ ທີ່ບໍ່ໄດ້ຕົກລົງກັນມາກ່ອນ ຫຼື ບໍ່ໄດ້ເຮັດສັນຍານຳກັນ.
ຕົວຢ່າງ	**ກ** ຂີ່ລົດຕຳກັບລົດ **ຂ** ເຮັດໃຫ້ **ຂ** ໄດ້ຮັບບາດເຈັບ ໂດຍບໍ່ໄດ້ມີການຕົກລົງນຳກັນມາກ່ອນ.
ເຫດຜົນໃນການປັບປຸງ	ມາດຕານີ້ ປັບປຸງມາຈາກມາດຕາ 2 ວັກ 2 ຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ປີ 2008, ໂດຍປ່ຽນປະໂຫຍກຈາກຄຳວ່າ: "**ສາຍພົວພັນທາງດ້ານກົດໝາຍ ທີ່ເກີດຂຶ້ນໂດຍບໍ່ມີສັນຍານຳກັນ**" ມາເປັນ "**ສາຍພົວພັນທາງແພ່ງ ທີ່ເກີດຂຶ້ນໂດຍບໍ່ມີສັນຍານຳກັນ**" ທັງສອງປະໂຫຍກນີ້ແມ່ນມີຄວາມໝາຍທາງດ້ານກົດໝາຍຄືກັນເພື່ອສອດຄ່ອງກັບຄວາມໝາຍຂອງປະມວນກົດໝາຍແພ່ງ ມາດຕາ 3 ຂໍ້ 1 ຊຶ່ງສາຍພົວພັນທາງແພ່ງ ໝາຍເຖິງ ສາຍພົວພັນທີ່ມີລັກສະນະຊັບສົມບັດ ຫຼື ບໍ່ມີລັກສະນະຊັບສົມບັດລະຫວ່າງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງດ້ວຍກັນກ່ຽວກັບວັດຖຸປະສົງ ຫຼື ເປົ້າໝາຍໃດໜຶ່ງ; ເພື່ອເຮັດໃຫ້ມີຄວາມຊັດເຈນທາງດ້ານເນື້ອໃນຫຼາຍຂຶ້ນ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 697, 703 ແລະ 709 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 471 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 471 ປະເພດຂໍ້ຜູກພັນນອກສັນຍາ

ຂໍ້ຜູກພັນນອກສັນຍາ ມີ ສາມ ປະເພດ ດັ່ງນີ້:

1. ການລະເມີດ;
2. ການເຮັດວຽກແທນຜູ້ອື່ນໂດຍບໍ່ມີການມອບໝາຍ;
3. ການຮັບຊັບສິ່ງຂອງ ຫຼື ຜົນປະໂຫຍດທີ່ຕົນບໍ່ມີສິດ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນປະເພດ ຂອງຂໍ້ຜູກພັນນອກສັນຍາ.
ຕົວຢ່າງ	1. ການລະເມີດ ໃຫ້ເບິ່ງຕາມຕົວຢ່າງຂອງມາດຕາ 472. 2. ການເຮັດວຽກແທນຜູ້ອື່ນໂດຍບໍ່ມີການມອບໝາຍ ໃຫ້ເບິ່ງຕາມຕົວຢ່າງ ຂອງມາດຕາ 496. 3. ການຮັບຊັບສິ່ງຂອງ ຫຼື ຜົນປະໂຫຍດທີ່ຕົນບໍ່ມີສິດ ໃຫ້ເບິ່ງຕາມຕົວຢ່າງ ຂອງມາດຕາ 501.

ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງຂຶ້ນໃໝ່ ເພື່ອກຳນົດເປັນແຕ່ລະປະເພດຂໍ້ຜູກພັນນອກສັນຍາ ບົນພື້ນຖານກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ປີ 2008, ພາກທີ III ມີ 4 ໝວດ. ຊຶ່ງໄດ້ໂຮມໝວດທີ 1 ແລະ ໝວດ 2 ມາດຕາ 83-95 ແມ່ນມີຄວາມໝາຍອັນດຽວກັນຈຶ່ງໄດ້ໂຮມເຂົ້າກັນເປັນປະເພດທີ 1 ການລະເມີດ. ສ່ວນໝວດທີ 3 ມາດຕາ 96-98 ທີ່ໄດ້ກຳນົດເຖິງການເຮັດວຽກແທນຜູ້ອື່ນ ແມ່ນຍັງຮັກສາໄວ້ເປັນປະເພດທີ 2 ການເຮັດວຽກແທນຜູ້ອື່ນໂດຍບໍ່ມີການມອບໝາຍ. ແລະ ໝວດ 4 ມາດຕາ 99-100 ທີ່ໄດ້ກຳນົດເຖິງການຮັບຊັບສິ່ງຂອງທີ່ຕົນບໍ່ມີສິດ ແມ່ນຍັງຮັກສາໄວ້ເປັນປະເພດທີ 3 ການຮັບຊັບສິ່ງຂອງ ຫຼື ຜົນປະໂຫຍດທີ່ຕົນບໍ່ມີສິດ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 697 - 702 (ການເຮັດວຽກແທນຜູ້ອື່ນໂດຍບໍ່ມີການມອບໝາຍ), ມາດຕາ 703 - 708 (ການຮັບຊັບສິ່ງຂອງ ຫຼື ຜົນປະໂຫຍດທີ່ຕົນບໍ່ມີສິດ), ມາດຕາ 709 - 724/2 (ການລະເມີດ) ຂອງປະມວນກົດໝາຍແພ່ງຍີ່ປຸ່ນ; ມາດຕາ 823 ຂໍ້ 1 ກຳນົດກ່ຽວກັບການລະເມີດ, 812 - 822 ການເຮັດວຽກແທນຜູ້ອື່ນ, ການຮັບຊັບສິ່ງຂອງທີ່ຕົນບໍ່ມີສິດ ຂອງປະມວນກົດໝາຍແພ່ງເຢຍລະມັນ; ມາດຕາ 420, 406, 412 ແລະ 414 ຂອງປະມວນກົດໝາຍແພ່ງ ແລະ ພານິດໄທ.
ມາດຕາອ້າງອີງ	ມາດຕາ 472, 496 ແລະ ມາດຕາ 501 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ໝວດທີ 2
ການລະເມີດ

ມາດຕາ 472 ການລະເມີດ

ການລະເມີດ ແມ່ນ ການກະທຳ ຫຼື ການເມີນເສີຍ ໂດຍເຈດຕະນາ ຫຼື ດ້ວຍຄວາມບໍ່ລະມັດລະວັງ ຂອງບຸກຄົນໃດໜຶ່ງ ທີ່ຂັດກັບກົດໝາຍ ແລະ ລະບຽບການ ຊຶ່ງຜູ້ລະເມີດນັ້ນ ຕ້ອງຮັບຜິດຊອບໃຊ້ແທນຄ່າເສຍຫາຍທີ່ຕົນໄດ້ກໍ່ຂຶ້ນ, ເວັ້ນເສຍແຕ່ຄວາມເສຍຫາຍນັ້ນ ຫາກເນື່ອງຈາກການປ້ອງກັນຕົວ, ການປະຕິບັດໜ້າທີ່ ທີ່ຖືກຕ້ອງຕາມກົດໝາຍ ຫຼື ຍ້ອນຄວາມຜິດຂອງຜູ້ຖືກເສຍຫາຍເອງ.

ຈຸດປະສົງ	ເພື່ອກຳນົດຫຼັກການ ແລະ ເງື່ອນໄຂ ທີ່ເປັນພື້ນຖານໃຫ້ກັບການລະເມີດ.
ຕົວຢ່າງ	1. **ການກະທຳ: ກ** ຂັບລົດລ່ວງໄຟແດງໄປຕຳເອົາລົດ **ຂ** ເຮັດໃຫ້ **ຂ** ໄດ້ຮັບບາດເຈັບ ແລະ ລົດກໍເປ່ເພ, **ກ** ຕ້ອງຮັບຜິດຊອບໃຊ້ແທນຄ່າເສຍຫາຍ. 2. **ການເມີນເສີຍ: ກ** ຍ່າງຫຼິ້ນຕອນແລງ ພໍດີບັງເອີນໄປພົບ **ຂ** ກັບ **ຄ** ກຳລັງຕີກັນຢູ່ ເຮັດໃຫ້ **ຄ** ລົ້ມລົງກັບພື້ນ, ຈາກນັ້ນ **ຂ** ໄດ້ແລ່ນໜີປ່ອຍໃຫ້ **ຄ** ນອນໝົດສະຕິຢູ່, **ກ** ເຫັນແຕ່ບໍ່ໄດ້ຊ່ວຍ ແລະ ບໍ່ໄດ້ບອກໃຜໃຫ້ມາຊ່ວຍ ແລ້ວຍ່າງໜີໄປຈາກສະຖານທີ່ເກີດເຫດ. 3. **ການປ້ອງກັນຕົວ: ກ** ກັບ **ຂ** ຜິດຖຽງກັນ **ກ** ເປັນຜູ້ລົງມືຕີ **ຂ** ແຕ່ **ຂ** ຫຼົບທັນ ແລ້ວ **ຂ** ຕີກັບຄືນ ເຮັດໃຫ້ **ກ** ໄດ້ຮັບບາດເຈັບ. 4. **ການປະຕິບັດໜ້າທີ່ ທີ່ຖືກຕ້ອງ:** ແພດຜ່າຕັດ ໃນເວລາປະຕິບັດໜ້າທີ່ ເຮັດໃຫ້ຄົນເຈັບໄດ້ຮັບບາດເຈັບ. 5. **ຄວາມຜິດຂອງຜູ້ຖືກເສຍຫາຍເອງ: ກ** ຂີ່ລົດຈັກໄວ ແລ້ວໄປຕຳເສົາໄຟຟ້າ ໄດ້ຮັບບາດເຈັບສາຫັດ.

ເຫດຜົນໃນການປັບປຸງ	ມາດຕານີ້ ປັບປຸງມາຈາກມາດຕາ 83 ສາເຫດທີ່ພາໃຫ້ມີຄວາມຮັບຜິດຊອບ ແລະ ມາດຕາ 86 ຄວາມຜິດ ກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ປີ 2008, ລວມເຂົ້າກັນ ເພື່ອເຫັນໄດ້ກ່ຽວກັບການລະເມີດທີ່ພາໃຫ້ມີຄວາມເສຍຫາຍເກີດຂຶ້ນ ແລະ ການເມີຍເສີຍ ຈຶ່ງກ້າວໄປເຖິງຄວາມຮັບຜິດຊອບຕໍ່ຜົນເສຍຫາຍຕ່າງໆ. ໃນການນຳເອົາ ມາດຕາ 83 ແລະ ມາດຕາ 86 ມາໂຮມເຂົ້າກັນເປັນມາດຕາດຽວນັ້ນ ເພື່ອກຳນົດເປັນເງື່ອນໄຂທີ່ສຳຄັນ ຊຶ່ງມີ 4 ເງື່ອນໄຂ: 1) ການລະເມີດໂດຍເຈດຕະນາ ຫຼື ການເມີນເສີຍ; 2) ການກະທຳດັ່ງກ່າວມັນແຕະຕ້ອງເຖິງກົດໝາຍ; 3) ມັນພາໃຫ້ເກີດຄວາມເສຍຫາຍ; 4) ສາຍພົວພັນເຫດ ແລະ ຜົນ ລະຫວ່າງການກະທຳ ແລະ ຄວາມເສຍຫາຍ. ນອກຈາກນີ້, ການກຳນົດຄຳສັບໃນມາດຕາ 86 ຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ປີ 2008, ໂດຍສະເພາະຄຳວ່າ **"ຄວາມຜິດ"** ມາເປັນ **"ການລະເມີດ"** ຍ້ອນວ່ານີ້ແມ່ນສາຍພົວພັນທາງແພ່ງ ຖ້າໃຊ້ຄຳວ່າ **"ຄວາມຜິດ"** ອາດຈະພາໃຫ້ເຂົ້າໃຈຜິດກັບສາຍພົວພັນທາງອາຍາໄດ້ ສະນັ້ນ ເພື່ອເປັນການຈຳແນກໃຫ້ເຫັນຢ່າງຈະແຈ້ງຈຶ່ງປ່ຽນຄຳວ່າ**"ຄວາມຜິດ"** ມາເປັນ **"ການລະເມີດ".**
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 709 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ; ມາດຕາ 430 ຂອງປະມວນກົດໝາຍແພ່ງ ແລະ ພານິດໄທ; ມາດຕາ 1240 ຂອງປະມວນກົດໝາຍແພ່ງຝຣັ່ງ ປີ 2016; ມາດຕາ 823, ຂໍ້ 1 ຂອງປະມວນກົດໝາຍແພ່ງເຢຍລະມັນ.
ມາດຕາອ້າງອີງ	ມາດຕາ 473, 474, 481(ວັກ3),483, 487 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 473 ລັກສະນະຂອງຄວາມເສຍຫາຍ

ຄວາມເສຍຫາຍ ຕ້ອງມີລັກສະນະແນ່ນອນ ທີ່ໄດ້ເກີດຂຶ້ນແລ້ວ ຫຼື ແນ່ນອນຈະເກີດຂຶ້ນໃນອະນາຄົດ.

ຄວາມເສຍຫາຍທີ່ອາດຈະເກີດຂຶ້ນ ຫຼື ບໍ່ເກີດຂຶ້ນໃນອະນາຄົດນັ້ນບໍ່ໃຫ້ຖືວ່າເປັນຄວາມເສຍຫາຍທີ່ແນ່ນອນ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນກ່ຽວກັບລັກສະນະຄວາມເສຍຫາຍ ທີ່ມີລັກສະນະແນ່ນອນ.
ຕົວຢ່າງ	**1. ກ** ໄດ້ຂີ່ລົດຕຳລົດ **ຂ**, ຈົນເຮັດໃຫ້ **ຂ** ໄດ້ຮັບບາດເຈັບຂາຫັກ ແລະ ເຮັດໃຫ້ລົດຂອງ **ຂ** ເປ່ເພ່ ກະຈົກແກ້ວປະຕູແຕກ ແລະ ປະຕູກຳບຸ້ມບໍ່ສາມາດອັດປະຕູໄດ້, **ຂ** ຖືກນຳສົ່ງໂຮງໝໍ ແລະ ໄດ້ຮັບການປິ່ນປົວເປັນເວລາ 1 ເດືອນ ມີຄ່າໃຊ້ຈ່າຍທັງໝົດ ຈຳນວນ 5.000.000 ກີບ, ຊຶ່ງເຮັດໃຫ້ **ຂ** ຂັບລົດບໍ່ໄດ້ ແລະ ຂາດລາຍໄດ້ຈາກການຂົນສົ່ງສິນຄ້າ ເດືອນລະ ຈຳນວນ 2.500.000 ກີບ ຊຶ່ງເປັນລາຍໄດ້ທີ່ແນ່ນອນ. ໃນກໍລະນີນີ້ **ກ** ຕ້ອງຮັບຜິດຊອບຄ່າເສຍຫາຍແມ່ນຄ່າປິ່ນປົວ ຈຳນວນ 5.000.000 ກີບ, ສ່ວນຄ່າເສຍຫາຍໃນອນາຄົດແມ່ນການຂາດລາຍໄດ້ ຂອງ **ຂ** ຈາກການຂົນສົ່ງສິນຄ້າ, ຊຶ່ງລາຍໄດ້ ຂອງ **ຂ** ເດືອນລະ ຈຳນວນ 2.500.000 ກີບ ນັ້ນ ແມ່ນ **ກ** ຕ້ອງຮັບຜິດຊອບ ຈົນກວ່າ **ຂ** ຈະສາມາດຂັບລົດໄດ້ (ໂດຍຕ້ອງໄດ້ຮັບການຢັ້ງຢືນຈາກແພດຜູ້ຊຳນານ). **2. ກ** ໄດ້ຂີ່ລົດຕຳລົດ **ຂ**, ເຮັດໃຫ້ **ຂ** ໄດ້ຮັບບາດເຈັບຕາມການແນະນຳຂອງແພດ **ຂ** ອາດຈະມີຜົນສະທ້ອນທາງສະໝອງໃນອະນາຄົດ, ເຮັດໃຫ້ **ຂ** ອາດຈະບໍ່ສາມາດຂັບລົດໄດ້ ແລະ ອາດຈະຕ້ອງໄດ້ຮັບການປິ່ນປົວໃນຕໍ່ໜ້າ. ເຊິ່ງໃນກໍລະນີນີ້ **ກ** ອາດຈະຕ້ອງຮັບຜິດຊອບຄ່າປິ່ນປົວ ແລະ ລາຍຮັບຂອງ **ຂ** ທີ່ຈະເກີດຂຶ້ນໃນອານາຄົດ.

ເຫດຜົນໃນການປັບປຸງ	ມາດຕານີ້ ປັບປຸງເນື້ອໃນມາຈາກ ມາດຕາ 84 ລັກສະນະຂອງຄວາມເສຍຫາຍ, ຂອງກົດໝາຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ປີ 2008. ປະໂຫຍກ **(ຄວາມເສຍຫາຍທີ່ມີລັກສະນະແນ່ນອນ)** ໝາຍຄວາມວ່າ ຄວາມເສຍຫາຍທີ່ເກີດຂຶ້ນແລ້ວ ແລະ ສາມາດຢັ້ງຢືນ ຫຼື ຄິດໄລ່ໄດ້; ປະໂຫຍກ **(ຄວາມເສຍຫາຍທີ່ແນ່ນອນຈະເກີດຂຶ້ນໃນອະນາຄົດ)** ໝາຍຄວາມວ່າ ຄວາມເສຍຫາຍທີ່ສາມາດຄາດຄະເນ ຫຼື ຢັ້ງຢືນໄດ້ວ່າຈະເກີດຂຶ້ນຈິງໃນຕໍ່ໜ້າ; ປະໂຫຍກ **(ຄວາມເສຍຫາຍທີ່ອາດຈະເກີດຂຶ້ນ ຫຼື ບໍ່ເກີດຂຶ້ນໃນອະນາຄົດນັ້ນ)** ໝາຍຄວາມວ່າ ຄວາມເສຍຫາຍທີ່ບໍ່ສາມາດຄາດຄະເນໄດ້ວ່າຈະເກີດຂຶ້ນ ຫຼື ບໍ່ເກີດຂຶ້ນໃນຕໍ່ໜ້າ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 709 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 473-479 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 474 ສາຍພົວພັນລະຫວ່າງເຫດ ແລະ ຜົນເສຍຫາຍ

ບຸກຄົນໃດໜຶ່ງ ຈະມີຄວາມຮັບຜິດຊອບໃນການໃຊ້ແທນຄ່າເສຍຫາຍ ກໍຕໍ່ເມື່ອຫາກມີສາຍພົວພັນ ເຫດ ແລະ ຜົນ ລະຫວ່າງ ການກະທຳກັບຄວາມເສຍຫາຍທີ່ເກີດຂຶ້ນ ຊຶ່ງສະແດງອອກ ດັ່ງນີ້:

1. ເຫດ ຕ້ອງແມ່ນສິ່ງຈຳເປັນທີ່ພາໃຫ້ເກີດຜົນເສຍຫາຍ;
2. ເຫດ ຕ້ອງເກີດຂຶ້ນກ່ອນຜົນເສຍຫາຍ;
3. ເຫດ ຕ້ອງເປັນສາເຫດໂດຍກົງຂອງຜົນເສຍຫາຍ.

ຈຸດປະສົງ	ເພື່ອກຳນົດຫຼັກການ ແລະ ເງື່ອນໄຂ ຄວາມຮັບຜິດຊອບໃນການໃຊ້ແທນຄ່າເສຍຫາຍ ໃນສາຍພົວພັນລະຫວ່າງເຫດ ແລະ ຜົນເສຍຫາຍ.
ຕົວຢ່າງ	**1. ກ** ຂັບຂີ່ລົດຈັກຕົກຂຸມ ແລ້ວເຮັດໃຫ້ **ຂ** ຜູ້ຊ້ອນທ້າຍຕົກລົດ, ຈຶ່ງເຮັດໃຫ້ລົດຈັກຂອງ **ຄ** ທີ່ແລ່ນຕາມຫຼັງຕຳ **ຂ** ເຮັດໃຫ້ຜູ້ຊ້ອນທ້າຍໄດ້ຮັບບາດເຈັບ. ເນື່ອງຈາກວ່າ **ກ** ແມ່ນເຫດ ແລະ **ຄ** ແມ່ນ ຜົນເສຍຫາຍ ເຫັນວ່າການໄດ້ຮັບບາດເຈັບນັ້ນແມ່ນເກີດຈາກຜູ້ຂັບຂີ່ລົດທັງສອງຄັນ, ໃນກໍລະນີນີ້ **ຄ** ຕ້ອງມີຄວາມຮັບຜິດຊອບຕໍ່ເຫດການທີ່ເກີດຂຶ້ນ, ສ່ວນ **ກ** ມີຄວາມຮັບຜິດຊອບຮ່ວມ ເນື່ອງຈາກບໍ່ມີຄວາມລະມັດລະວັງໃນການຂັບຂີ່ລົດຈັກດັ່ງກ່າວ. **2.** ບໍລິສັດ **ກ** ໄດ້ຮັບເໝົາກໍ່ສ້າງເສັ້ນທາງ (ໄລຍະເວລາໃນການຮັບປະກັນແມ່ນເປັນເວລາ 2 ປີ ຕາມທີ່ກຳນົດໄວ້ໃນສັນຍາ). ຫລັງຈາກນັ້ນ ກໍໄດ້ເປີດໃຊ້ ພຽງເກົ້າເດືອນ ຖະຫນົນຫົນທາງກໍໄດ້ຮັບຄວາມເປ່ເພເສຍຫາຍ. ທາງບໍລິສັດ **ກ** ຈຶ່ງໄດ້ປົວແປງເສັ້ນທາງຄືນໃຫມ່ (ຍັງຢູ່ໃນຊ່ວງໄລຍະເວລາຂອງການຮັບປະກັນ); ໃນຂະນະເວລາປົວແປງເສັ້ນທາງຢູ່ນັ້ນບໍລິສັດ **ກ** ບໍ່ໄດ້ໃສ່ປ້າຍເຕືອນໄວ້, ຕໍ່ມາ **ຂ** ໄດ້ຂີ່ລົດຈັກມາພໍດີ ຊຶ່ງເຮັດໃຫ້ລົດຈັກ **ຂ** ຕົກຂຸມ ແລ້ວເຮັດໃຫ້ **ຂ** ໄດ້ຮັບບາດເຈັບ ແລະ ລົດຈັກເປ່ເພເສຍຫາຍ. ໃນກໍລະນີນີ້ ບໍລິສັດ **ກ** ຕ້ອງມີພັນທະໃນການໃຊ້ແທນຄ່າເສຍຫາຍ ໃຫ້ແກ່ **ຂ**. ເນື່ອງຈາກວ່າໃນເວລາສ້ອມແປງເສັ້ນທາງຢູ່ນັ້ນ ທາງບໍລິສັດ **ກ** ບໍ່ໄດ້ໃສ່ປ້າຍເຕືອນ ຫຼື ສັນຍາລັກ ເພື່ອແຈ້ງເຕືອນບຸກຄົນທີ່ຂັບຂີ່ ມີສະຕິໃນການຂັບຂີ່ດ້ວຍຄວາມລະມັດລະວັງ ເພາະເຂດດັ່ງກ່າວນັ້ນກຳລັງມີການກໍ່ສ້າງເສັ້ນທາງຢູ່.

	3. ກ ຂັບຂີ່ລົດ ຕຳທ້າຍລົດ **ຂ** ທີ່ຈອດຢູ່ໄຟແດງ, ລົດ **ຂ** ໄປຕຳລົດຈັກຂອງ **ຄ** ທີ່ຈອດຢູ່ທາງໜ້າ ເຮັດໃຫ້ລົດ **ຄ** ໄດ້ຮັບຄວາມເສຍຫາຍ. ການຂັບຂີ່ລົດ ຂອງ **ກ** ເປັນສາເຫດທີ່ເຮັດໃຫ້ເກີດຄວາມເສຍຫາຍ; ສະນັ້ນ **ກ** ຕ້ອງຮັບ ຜິດຊອບຕໍ່ຄວາມເສຍຫາຍທີ່ເກີດຂຶ້ນ.
ເຫດຜົນໃນການປັບປຸງ	ມາດຕານີ້ ປັບປຸງມາຈາກມາດຕາ 87 ຂອງກົດໝາຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ປີ 2008, ຊຶ່ງໄດ້ປັບປຸງຄຳສັບບາງຢ່າງ ເພື່ອໃຫ້ສອດຄ່ອງ ແລະ ເຂົ້າໃຈງ່າຍຂຶ້ນ.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງ ຂອງປະເທດອື່ນ	ມາດຕາ 709, 710 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 470, 472, 473 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 475 ປະເພດຄວາມເສຍຫາຍ

ຄວາມເສຍຫາຍ ມີ ປະເພດ ດັ່ງນີ້:

1. ທາງດ້ານຊັບ;
2. ທາງດ້ານສຸຂະພາບ ຫຼື ຊີວິດ;
3. ທາງດ້ານ ຊື່ສຽງ, ກຽດສັກສີ;
4. ທາງດ້ານຈິດໃຈ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນ ເຖິງປະເພດຂອງຄວາມເສຍຫາຍ.
ຕົວຢ່າງ	**1. ກ** ຂີ່ລົດຈັກຕຳລົດເກັງຂອງ **ຂ** ທີ່ຈອດຢູ່ແຄມທາງ ເຮັດໃຫ້ລົດຂອງ **ຂ** ເປ່ເພ ເສຍຫາຍ. ຊຶ່ງ **ຂ** ໄດ້ໃຊ້ຈ່າຍຄ່າສ້ອມແປງລົດດັ່ງກ່າວ ເປັນຈຳນວນ 2.500.000 ກີບ; ໃນກໍລະນີນີ້ **ກ** ຕ້ອງໄດ້ຮັບຜິດຊອບຄ່າສ້ອມແປງລົດ ຕາມມູນຄ່າຕົວຈິງ ຈຳນວນ 2.500.000 ກີບ ຂອງ **ຂ**. **2. ກ** ໄດ້ຂັບຂີ່ລົດໃຫຍ່ ໄປຕະຫຼາດ ໄດ້ເກີດອຸປະຕິເຫດຕຳລົດຈັກ **ຂ** ເສຍ ຊີວິດຄາທີ່. ສານຕັດອິດສະຫຼະພາບ **ກ** ສອງປີຫົກເດືອນໃນສະຖານຫຼົບຫຼີກ ອຸປະຕິເຫດ ແລະ ປັບໃໝ ຈຳນວນ 1.000.000 ກີບ ໃຫ້ **ກ** ຮັບຜິດຊອບ ມ້ຽນຄາບສົ່ງສະການ ຈຳນວນ 25.000.000 ກີບ, ຄ່າປ່ວແປງຈິດໃຈ ຈຳນວນ 30.000.000 ກີບ, ຄ່າສິ້ນເປືອງ ຈຳນວນ 5.000.000 ກີບ. **3. ກ** ໄດ້ເອົາຮູບ **ຂ** ລົງໃນແຟັດບຸກ ໂດຍໄດ້ຂຽນເນື້ອໃນທີ່ບົ່ງບອກໃຫ້ເຫັນ ວ່າ **ຂ** ເປັນຄົນບໍ່ດີ, ຂີ້ຕົວະ, ສໍ້ໂກງຊັບຂອງຄົນອື່ນ ໂດຍບໍ່ມີມູນຄວາມຈິງ ຊຶ່ງເຮັດໃຫ້ບົດບາດຂອງ **ຂ** ບໍ່ມີຄວາມເຊື່ອໝັ້ນໃນທາງທຸລະກິດ ເພື່ອສ້າງ ຄວາມປັ່ນປ່ວນ ແລະ ເຮັດໃຫ້ລາຍຮັບຂອງ **ຂ** ຫຼຸດລົງ ເນື່ອງຈາກບຸກຄົນອື່ນ ແລະ ສັງຄົມ ໄດ້ຮັບຂໍ້ມູນທີ່ບໍ່ຖືກຕ້ອງ ແລະ ບໍ່ຢາກຮ່ວມທຸລະກິດນຳ, ຊຶ່ງ ການກະທຳຂອງ **ກ** ເປັນການລະເມີດຕໍ່ຊື່ສຽງ ຫຼື ກຽດສັກສີຂອງ **ຂ**, ໃນກໍລະນີນີ້ **ກ** ຈະຕ້ອງໄດ້ຮັບຜິດຊອບຕໍ່ຄວາມເສຍຫາຍທີ່ລະເມີດຕໍ່ຊື່ສຽງ ຫຼື ກຽດສັກສີ **ຂ** ໂດຍການຟື້ນຟູຄືນທາງດ້ານຊື່ສຽງ ຫຼື ກຽດສັກສີ ດ້ວຍວິທີການຂໍໂທດ ແລະ ການແກ້ຂ່າວຜ່ານສື່ມວນຊົນ; ນອກຈາກນັ້ນ ຈ່າຍຄ່າເສຍຫາຍ ຫຼື ປັບໃໝຕາມລະບຽບກົດໝາຍ ຫຼື ຕາມຣິດຄອງປະເພນີ. **4. ກ** ໄດ້ຂັບຂີ່ລົດຈັກ ໄປຕະຫຼາດ ໄດ້ເກີດອຸປະຕິເຫດຕຳລົດຈັກ **ຂ**, ເຮັດໃຫ້ **ຂ** ໄດ້ຮັບບາດເຈັບສາຫັດ ແລະ ໄດ້ນຳສົ່ງໂຮງໝໍ ໃນໄລຍະຕໍ່ມາ **ຂ** ໄດ້ເສຍ ຊີວິດຢູ່ໂຮງໝໍ. **ຄ** ໄດ້ຮ້ອງຂໍເອົາຄ່າເສຍຫາຍ ຊຶ່ງເນື່ອງມາຈາກ ຄວາມເສົ້າໃຈ,

	ສະລິດໃຈ ເພາະວ່າ **ຂ** ຜູ້ເປັນພີ່ວ່ຽນໄດ້ເສຍຊີວິດ ຊຶ່ງໄດ້ຮັບການກະທົບກະເທືອນຈາກການກະທຳຂອງ **ກ,** ໃນກໍລະນີນີ້ **ກ** ຕ້ອງຮັບຜິດຊອບໃນການໃຊ້ແທນຄ່າປິ່ນປົວ, ຄ່າປົວແປງຈິດໃຈ, ມ້ຽນຄາບສິ່ງສະການ ແລະ ຄ່າກິນທານ ລວມເປັນເງິນທັງໝົດ ຈຳນວນ 35.578.000 ກີບ.
ເຫດຜົນໃນການປັບປຸງ	ມາດຕານີ້ ປັບປຸງມາຈາກມາດຕາ 85 ປະເພດຂອງຄວາມເສຍຫາຍ, ຂອງກົດໝາຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ປີ 2008, ຊຶ່ງໄດ້ກຳນົດປະເພດຂອງຄວາມເສຍຫາຍມີ 3 ປະເພດ: (1) ທາງດ້ານຊັບສິ່ງຂອງ, (2) ທາງດ້ານຊີວິດ ຫຼື ສຸຂະພາບ ແລະ (3) ທາງດ້ານຈິດໃຈ ແມ່ນຮັກສາເດີມໄວ້; ສະນັ້ນ ມາດຕາດັ່ງກ່າວຍັງບໍ່ທັນຄົບຖ້ວນກ່ຽວກັບປະເພດຄວາມເສຍຫາຍ ຈຶ່ງໄດ້ເພີ່ມເຕີມກ່ຽວກັບປະເພດຄວາມເສຍຫາຍ ຈາກ 3 ປະເພດ ມາເປັນ 4 ປະເພດ ໂດຍສະເພາະການກຳນົດຄວາມເສຍຫາຍທາງດ້ານຊື່ສຽງ, ກຽດສັກສີ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 420, 423 ຂອງປະມວນກົດໝາຍແພ່ງ ແລະ ພານິດໄທ; ມາດຕາ 611 ຂອງປະມວນກົດໝາຍແພ່ງຫວຽດນາມ; ມາດຕາ 824 ຂອງປະມວນກົດໝາຍແພ່ງເຢຍລະມັນ.
ມາດຕາອ້າງອີງ	ມາດຕາ 476 - 479 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 476 ຄວາມເສຍຫາຍທາງດ້ານຊັບ

ຄວາມເສຍຫາຍທາງດ້ານຊັບ ແມ່ນ ຄວາມເສຍຫາຍທີ່ເນື່ອງມາຈາກການທີ່ຊັບໃດໜຶ່ງຖືກທຳລາຍ, ເປ່ເພ ຫຼື ເສື່ອມຄຸນນະພາບ ແລະ ບໍ່ສາມາດໃຊ້ງານໄດ້ທັງໝົດ ຫຼື ບາງສ່ວນ ແລະ ເຮັດໃຫ້ຜູ້ຖືກເສຍຫາຍເສຍຜົນປະໂຫຍດ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນ ລັກສະນະຂອງຄວາມເສຍຫາຍຕໍ່ຊັບ.
ຕົວຢ່າງ	**1. ກ** ໄດ້ຈູດຂີ້ເຫຍື້ອຫຼັງເຮືອນ ຊຶ່ງເຮັດໃຫ້ໄຟລາມໄປໄໝ້ເຮືອນ **ຂ** ເສຍຫາຍ ແລະ ຊັບສິນພາຍໃນເຮືອນກໍ່ຖືກເສຍຫາຍທັງໝົດ ຊຶ່ງປະເມີນມູນຄ່າ ຄວາມເສຍຫາຍ ຈຳນວນ 200.000.000 ກີບ. ໃນກໍລະນີ **ກ** ຕ້ອງມີຄວາມຮັບຜິດຊອບຕໍ່ຄວາມເສຍຫາຍທາງດ້ານ ຊັບສິນພາຍໃນເຮືອນຂອງ **ຂ** ທັງໝົດ. **2. ກ** ໄດ້ຂີ່ລົດໄປຫາພີ່ນ້ອງ ໃນລະຫວ່າງຂີ່ລົດໄປປະມານ 100 ແມັດ ໄດ້ເກີດອຸປະຕິເຫດ ໄປຕຳທາງຫຼັງລົດຂອງ **ຂ** ເຮັດໃຫ້ ລົດຂອງ **ຂ** ເປ່ເພບາງສ່ວນ ຊຶ່ງຄວາມເສຍຫາຍລົດຄັນດັ່ງກ່າວແມ່ນໂກບລົດຈັກດ້ານຫຼັງແຕກ, ຊຶ່ງປະເມີນມູນຄ່າຄວາມເສຍຫາຍ ຈຳນວນ 250.000 ກີບ, ໃນກໍລະນີນີ້ **ກ** ມີຄວາມຮັບຜິດຊອບຕໍ່ຄວາມເສຍຫາຍທາງດ້ານຊັບສິນ ເນື່ອງຈາກລົດ ຂອງ **ຂ** ເປ່ເພ ຍ້ອນຖືກລົດ **ກ** ຕຳ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ ໄດ້ສ້າງຂຶ້ນມາໃໝ່ ເນື່ອງຈາກວ່າ: ຄວາມເສຍຫາຍທາງດ້ານຊັບ ມັນແຕກຕ່າງ ກັບຄວາມເສຍຫາຍຂອງແຕ່ລະປະເພດ, ສະນັ້ນ ຈຶ່ງໄດ້ຂຽນແຍກອອກວ່າຄວາມເສຍຫາຍທາງດ້ານຊັບມັນມີອັນໃດແດ່ເພື່ອຍົກໃຫ້ເຫັນໄດ້, ສ່ວນກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ປີ 2008, ມາດຕາ 85 ປະເພດຂອງຄວາມເສຍຫາຍ ໄດ້ກຳນົດປະເພດຂອງຄວາມເສຍຫາຍເທົ່ານັ້ນ ຊຶ່ງໄດ້ຂຽນແບບລວມໆ ບໍ່ໄດ້ຈຳແນກ ແລະ ບໍ່ໄດ້ອະທິບາຍໃຫ້ເຫັນທາງດ້ານເນື້ອໃນທີ່ໄດ້ກຳນົດເປັນອັນສະເພາະຂອງຄວາມເສຍຫາຍດັ່ງກ່າວ ເອົາໄວ້ເປັນອັນລະອຽດ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 608 ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2005; ມາດຕາ 759 ຂອງປະມວນກົດໝາຍແພ່ງກຳປູເຈຍ.

ມາດຕາອ້າງອີງ	ມາດຕາ 475 - 479 ແລະ 480 ຂໍ້ 1 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 477 ຄວາມເສຍຫາຍທາງດ້ານສຸຂະພາບ ຫຼື ຊີວິດ

ຄວາມເສຍຫາຍທາງດ້ານສຸຂະພາບ ຫຼື ຊີວິດ ແມ່ນ ຄວາມເສຍຫາຍທີ່ເກີດຂຶ້ນແກ່ບຸກຄົນໃດໜຶ່ງ ຊຶ່ງເຮັດໃຫ້ຮ່າງກາຍໄດ້ຮັບບາດເຈັບ ຫຼື ຈົນເຖິງຂັ້ນເສຍຊີວິດ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນ ລັກສະນະຂອງຄວາມເສຍຫາຍທາງດ້ານສຸຂະພາບ ຫຼື ຊີວິດ.
ຕົວຢ່າງ	**1. ກ** ໄປຊອກຍິງໂຕສັດຢູ່ປ່າ ອາກາດຕອນເຊົ້າມື້ນັ້ນມີນ້ຳໝອກຕົກຫຼາຍບໍ່ສາມາດແນມເຫັນກັນຢ່າງຊັດເຈນ, **ກ** ໄດ້ແນມເຫັນໂຕລີງຢູ່ເທິງຕົ້ນໄມ້ ຄິດວ່າແນວໃດກໍແມ່ນໂຕລີງແທ້ໆ ຈຶ່ງໄດ້ຍິງໃສ່ໜຶ່ງບາດ, ແລ້ວແລ່ນໄປເບິ່ງຈຶ່ງຮູ້ວ່າໄດ້ຍິງ **ຂ** ຕາຍຄ່າທີ່. **2. ກ** ໄດ້ຂັບລົດເກັ່ງ ຊຶ່ງຂັບຂີ່ມາແຕ່ບ້ານ ຈຸດປະສົງຈະໄປບ້ານພີ່ນ້ອງ ດ້ວຍຄວາມໄວ 80-90ກມ/ຊມ ພໍຮອດໃນໄລຍະໜຶ່ງ ເຮັດໃຫ້ລົດໄດ້ເສຍຫຼັກໄປຕຳເອົາລົດຈັກທີ່ສວນທາງກັນກ້ຳຊ້າຍມື ຂອງ **ກ** ເຮັດໃຫ້ **ຂ** ໄດ້ຮັບບາດເຈັບສາຫັດ ແລ້ວໄປເສຍຊີວິດຢູ່ໂຮງໝໍ, ໃນກໍລະນີນີ້ **ກ** ຕ້ອງຮັບຜິດຊອບເນື່ອງຈາກໄດ້ສ້າງຄວາມເສຍຫາຍທາງດ້ານ ສຸຂະພາບ ຫຼື ຊີວິດ ຂອງ **ຂ**.
ເຫດຜົນໃນການສ້າງໃໝ່	ມາດຕານີ້ ໄດ້ສ້າງຂຶ້ນມາໃໝ່ ບົນພື້ນຖານການສຶກສາຄົ້ນຄວ້າໂດຍອີງໃສ່ ປະມວນ ກົດໝາຍແພ່ງ ຂອງຫຼາຍປະເທດ ໄດ້ກຳນົດກ່ຽວກັບຄວາມເສຍຫາຍທາງດ້ານສຸຂະພາບ ຫຼື ຊີວິດເຊັ່ນ: ຄ່າປ່ວຍການ, ຄ່າປິ່ນປົວ, ຄ່າຊົດເຊີຍເນື່ອງມາຈາກການເສຍອົງຄະ ແລະ ຄ່າປ້ວແປງຈິດໃຈໃນກໍລະນີທີ່ມີການເສຍຊີວິດ ໂດຍອີງຕາມການຕົກລົງຂອງຄູ່ກໍລະນີ ຫຼື ຕາມການພິຈາລະນາຂອງສານດ້ວຍຄວາມເໝາະສົມ. ສະນັ້ນ ຄວາມເສຍຫາຍທາງດ້ານສຸຂະພາບ ຫຼື ຊີວິດແມ່ນ ໄດ້ກຳນົດເປັນໜຶ່ງໃນປະເພດຂອງຄວາມເສຍຫາຍ ໂດຍອີງຕາມມາດຕາ 85 ປະເພດຂອງຄວາມເສຍຫາຍ, ຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ປີ 2008, ຊຶ່ງມາດຕາດັ່ງກ່າວໄດ້ຂຽນແບບລວມໆ ແລະ ບໍ່ໄດ້ຂຽນເນື້ອໃນອະທິບາຍຢ່າງລະອຽດ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 443 ແລະ 444 ຂອງປະມວນກົດໝາຍແພ່ງ ແລະ ພານິດໄທ; ມາດຕາ 760 ຂອງປະມວນກົດໝາຍແພ່ງກຳປູເຈຍ.
ມາດຕາອ້າງອີງ	ມາດຕາ 475, 476, 479 ແລະ 480 ຂໍ້ 2 ແລະ 3 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ໃນການພິຈາລະນາຂອງສານກ່ຽວກັບ ຄວາມເສຍຫາຍທາງດ້ານສຸຂະພາບ ຫຼື ຊີວິດ ສານຈະພິຈາລະນາ ຄ່າປ່ວຍການ, ຄ່າປິ່ນປົວ, ຄ່າທຳຂວັນຕາມປະເພນີ, ຄ່າຊົດເຊີຍເນື່ອງມາຈາກການເສຍອົງຄະ ແລະ ຄ່າປ້ວແປງຈິດໃຈໃນກໍລະນີທີ່ມີການເສຍຊີວິດ.

ມາດຕາ 478 ຄວາມເສຍຫາຍທາງດ້ານ ຊື່ສຽງ, ກຽດສັກສີ

ຄວາມເສຍຫາຍທາງດ້ານ ຊື່ສຽງ, ກຽດສັກສີ ແມ່ນ ຄວາມເສຍຫາຍທີ່ເກີດຂຶ້ນແກ່ບຸກຄົນໃດໜຶ່ງ ທີ່ໄດ້ຖືກກ່າວຫາ, ໃສ່ຮ້າຍ, ປ້ອຍດ່າ ຫຼື ເຜີຍແຜ່ຂໍ້ມູນສ່ວນຕົວ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນ ລັກສະນະຂອງຄວາມເສຍຫາຍທາງດ້ານ ຊື່ສຽງ, ກຽດສັກສີ.

ຕົວຢ່າງ	**ກ** ໄດ້ເຮັດທຸລະກິດຮ່ວມກັນກັບ **ຂ** ແຕ່ຕໍ່ມາມີບັນຫາໃນການດຳເນີນທຸລະກິດ, **ກ** ຈຶ່ງໄດ້ໂຄສະນາຕໍ່ຊຸມຊົນ ທາງເຟສບຸກ ໂດຍໃຊ້ຄຳປ່ອຍດ່າ ແລະ ໃສ່ຮ້າຍປ້າຍສີ. ຊຶ່ງໄດ້ກ່າວຫາວ່າ **ຂ** ເປັນບຸກຄົນທີ່ບໍ່ດີ, ສໍ້ໂກງ, ຍັກຍອກຊັບສິນຂອງ **ກ** ມາເປັນຂອງຕົນ, ຊຶ່ງການກະທຳຂອງ **ກ** ທີ່ສ້າງຂຶ້ນມານັ້ນ ເຮັດໃຫ້ບົດບາດຄວາມເຊື່ອໝັ້ນຂອງ **ຂ** ໃນທາງທຸລະກິດຂອງ **ຂ** ຕົກຕ່ຳ, ເສຍຫາຍທາງດ້ານວຽກງານ, **ຂ** ໄດ້ຮຽກຮ້ອງເອົາຄ່າປ່ອຍການຈາກ **ກ** ຊຶ່ງເຮັດໃຫ້ເສຍລາຍຮັບໃນຈຳນວນ 50.000.000 ກີບ, ໃນກໍລະນີນີ້ **ກ** ຕ້ອງຮັບຜິດຊອບຕໍ່ຄວາມເສຍຫາຍທີ່ຕົນໄດ້ກໍ່ຂຶ້ນໝາຍຄວາມວ່າ ຕ້ອງຟື້ນຟູທາງດ້ານຊື່ສຽງ, ກຽດສັກສີ ດ້ວຍການຂໍໂທດ ແລະ ການແກ້ຂ່າວຜ່ານສື່ມວນຊົນ ພ້ອມດ້ວຍການຈ່າຍຄ່າປ່ອຍການ ທີ່ເນື່ອງມາຈາກບໍ່ສາມາດພົວພັນຮ່ວມມື ແລະ ບໍ່ສາມາດດຳເນີນທຸລະກິດໄດ້ ຈຳນວນ 50.000.000 ກີບ ໃຫ້ແກ່ **ຂ**.
ເຫດຜົນໃນການສ້າງໃໝ່	ມາດຕານີ້ ໄດ້ສ້າງຂຶ້ນມາໃໝ່ ເພື່ອແກ້ໄຂບັນຫາກ່ຽວກັບເລື່ອງຄວາມເສຍຫາຍທີ່ກະທົບເຖິງຊື່ສຽງ, ກຽດສັກສີ ເພາະວ່າ ກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ປີ 2008 ມາດຕາ 85 ປະເພດຂອງຄວາມເສຍຫາຍ ບໍ່ໄດ້ກຳນົດກ່ຽວກັບບັນຫາດັ່ງກ່າວເອົາໄວ້ເປັນອັນລະອຽດ ແລະ ບົນພື້ນຖານການຄົ້ນຄວ້າ ປະມວນກົດໝາຍແພ່ງຂອງຫຼາຍປະເທດ ແມ່ນກໍໄດ້ກຳນົດບັນຫາດັ່ງກ່າວເອົາໄວ້. (ຕາມປຶ້ມອະທິບາຍຄຳສັບກົດໝາຍ ປີ 2007 (ໜ້າ1): ກຽດສັກສີ ແມ່ນຊື່ສຽງ ຄວາມຍົກຍ້ອງນັບຖື, ຄວາມມີໜ້າມີຕາໃນສັງຄົມຂອງຕົວບຸກຄົນ). ຄວາມເສຍຫາຍທາງດ້ານຊື່ສຽງ, ກຽດສັກສີ ແມ່ນຄວາມເສຍຫາຍທີ່ເກີດຂຶ້ນແກ່ບຸກຄົນໃດໜຶ່ງ ທີ່ໄດ້ຖືກກ່າວຫາ, ໃສ່ຮ້າຍ, ປ່ອຍດ່າ ຫຼື ເຜີຍແຜ່ຂໍ້ມູນສ່ວນຕົວ ຊຶ່ງມີຄວາມໝາຍ ດັ່ງນີ້: ຕໍ່ການກະທຳຂອງຜູ້ອື່ນໃນການສົ່ງຂ່າວທີ່ບໍ່ມີຄວາມຈິງ ເຮັດໃຫ້ເຊື່ອມເສຍຊື່ສຽງ ຫຼື ກຽດສັກສີ ຜູ້ສົ່ງຂ່າວຈະຕ້ອງໄດ້ຮັບຜິດຊອບ; ໃນກໍລະນີບຸກຄົນທີ່ສົ່ງຂ່າວສານເລື່ອງທີ່ຕົນບໍ່ຮູ້ ຊຶ່ງເປັນເລື່ອງທີ່ບໍ່ມີມູນຄວາມຈິງ ຫາກວ່າຜູ້ກ່ຽວ ຫຼື ຜູ້ໄດ້ຮັບຂ່າວສານນັ້ນ ມີສ່ວນໄດ້ເສຍກັບເລື່ອງນັ້ນແລ້ວຜູ້ສົ່ງຂ່າວບໍ່ຈຳເປັນຕ້ອງໃຊ້ແທນຄ່າເສຍຫາຍຫຼື ຈະບໍ່ມີຄວາມຮັບຜິດຊອບຕໍ່ບຸກຄົນອື່ນ. ດັ່ງນັ້ນ; ຄວາມເສຍຫາຍທາງດ້ານຊື່ສຽງ, ກຽດສັກສີ ເປັນຄວາມເສຍຫາຍທາງນາມະທຳ ຊຶ່ງຈະເປັນການຍາກ ທີ່ຈະຄິດໄລ່ຄ່າເສຍຫາຍໃຫ້ຄືກັນກັບຄວາມເສຍຫາຍທີ່ເປັນຮູບປະທຳ; ເມື່ອມີຄວາມເສຍຫາຍເກີດຂຶ້ນ ຄວາມຮັບຜິດຊອບຕໍ່ຄວາມເສຍຫາຍດ້ານຊື່ສຽງ, ກຽດສັກສີໄດ້ແກ່ການຟື້ນຟູຄືນຊື່ສຽງ, ກຽດສັກສີດ້ວຍການຂໍໂທດ, ການແກ້ຂ່າວຜ່ານສື່ມວນຊົນ, ຄ່າປ່ອຍການ, ຄ່າປັບໃໝ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 723 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ; ມາດຕາ 423 ຂອງປະມວນກົດໝາຍແພ່ງ ແລະ ພານິດໄທ; ມາດຕາ 762 ຂອງປະມວນກົດໝາຍແພ່ງກຳປູເຈຍ; ມາດຕາ 824 ຂອງປະມວນກົດໝາຍແພ່ງເຢຍລະມັນ.
ມາດຕາອ້າງອີງ	ມາດຕາ 475, 479 ແລະ 480 ຂໍ້ 4 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ການພິຈາລະນາຂອງສານ ກ່ຽວກັບຄວາມເສຍຫາຍທາງດ້ານ ຊື່ສຽງ, ກຽດສັກສີ ແມ່ນອີງໃສ່ການຮ້ອງຂໍ ຜູ້ຖືກເສຍຫາຍ.

ມາດຕາ 479 ຄວາມເສຍຫາຍທາງດ້ານຈິດໃຈ

ຄວາມເສຍຫາຍທາງດ້ານຈິດໃຈ ແມ່ນ ຄວາມເສຍຫາຍເນື່ອງຈາກ ຄວາມເສົ້າໂສກເສຍໃຈ, ສະລົດໃຈ ແລະ ຫົດຫູ່ຂອງບຸກຄົນໃດໜຶ່ງ ຊຶ່ງໄດ້ຮັບການກະທົບກະເທືອນຈາກການກະທຳຂອງບຸກຄົນໃດໜຶ່ງ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນ ລັກສະນະຂອງຄວາມເສຍຫາຍທາງດ້ານຈິດໃຈ.
ຕົວຢ່າງ	**ກ** ຂັບລົດແລ່ນດ້ວຍຄວາມໄວແລ້ວໄປຕຳ **ຂ** ທີ່ພວມຂີ່ລົດຈັກ ໄດ້ເຮັດ **ຂ** ຕາຍຄ່າທີ່. ຕໍ່ມາ **ຄ** ຜູ້ເປັນເມຍ ຂອງ **ຂ** ຜູ້ເສຍຊີວິດ ໄດ້ຮຽກຮ້ອງຄ່າເສຍຫາຍມີ: ຄ່າມ້ຽນຄາບສົ່ງສະການ, ຄ່າໃຊ້ຈ່າຍງັນເຮືອນດີ ແລະ ກິນທານ ຈຳນວນ 35.000.000 ກີບ, ຄ່າປິ່ນປົວ ຈຳນວນ 8.000.000 ກີບ, ຄ່າປົວແປງຈິດໃຈ ຈຳນວນ 30.000.000 ກີບ ລວມເປັນ ຈຳນວນ 73.000.000 ກີບ ໃນກໍລະນີນີ້ **ກ** ຕ້ອງຮັບຜິດຊອບຄ່າເສຍຫາຍທັງໝົດ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ ໄດ້ສ້າງຂຶ້ນໃໝ່ ບົນພື້ນຖານການສຶກສາຄົ້ນຄວ້າ ປະມວນກົດໝາຍແພ່ງຂອງຫຼາຍປະເທດ ເພາະວ່າກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາປີ 2008 ມາດຕາ 85 ປະເພດຂອງຄວາມເສຍຫາຍ ບໍ່ໄດ້ກຳນົດກ່ຽວກັບບັນຫາດັ່ງກ່າວເອົາໄວ້ເປັນອັນລະອຽດ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 710 - 711 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ; ມາດຕາ 610 ຂອງປະມວນກົດໝາຍແພ່ງຫວຽດນາມ; ມາດຕາ 760 ຂອງປະມວນກົດໝາຍແພ່ງກຳປູເຈຍ; ມາດຕາ 253 ຂໍ້ 2 ຂອງປະມວນກົດໝາຍແພ່ງເຢຍລະມັນ.
ມາດຕາອ້າງອີງ	ມາດຕາ 475-478 ແລະ 480 ຂໍ້ 5 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ການພິຈາລະນາຂອງສານ ກ່ຽວກັບຄວາມເສຍຫາຍທາງດ້ານຈິດໃຈ ແມ່ນອີງໃສ່ການຮ້ອງຂໍ ຜູ້ຖືກເສຍຫາຍ.

ມາດຕາ 480 ການກຳນົດຄ່າເສຍຫາຍແຕ່ລະປະເພດ

ການກຳນົດຄ່າເສຍຫາຍແຕ່ລະປະເພດ ໃຫ້ອີງໃສ່ການຮ້ອງຂໍຂອງຜູ້ຖືກເສຍຫາຍ, ການຕົກລົງກັນລະຫວ່າງ ຜູ້ຖືກເສຍຫາຍ ກັບ ຜູ້ລະເມີດ ຫຼື ສານເປັນຜູ້ກຳນົດ ໂດຍພິຈາລະນາຄ່າເສຍຫາຍ ດັ່ງນີ້:

1. ທາງດ້ານຊັບ: ຫົດແທນຄືນຕາມມູນຄ່າຂອງຊັບ, ຄ່າສ້ອມແປງ, ຄ່າປ່ວຍການຊັບ;
2. ທາງດ້ານຊີວິດ: ຄ່າມ້ຽນຄາບສົ່ງສະການ ແລະ ຄ່າກິນທານ, ຄ່າປົວແປງຈິດໃຈ, ຄ່າເບິ່ງແຍງລູກທີ່ຍັງບໍ່ທັນພົ້ນກະສຽນອາຍຸ ຫຼື ລູກທີ່ພົ້ນກະສຽນອາຍຸແລ້ວ ແຕ່ເປັນບ້າເສຍຈິດ ຫຼື ບໍ່ສາມາດອອກແຮງງານທີ່ຢູ່ໃນການເບິ່ງແຍງດູແລ ຂອງຜູ້ເສຍຊີວິດ;
3. ທາງດ້ານສຸຂະພາບ: ຄ່າປິ່ນປົວ ແລະ ຄ່າຟື້ນຟູສະພາບຮ່າງກາຍ, ຄ່າປ່ວຍການ, ຄ່າຜູ້ເບິ່ງແຍງ, ດູແລໃນເວລາປິ່ນປົວ, ຄ່າສູ່ຂວັນ ແລະ ຄ່າໃຊ້ຈ່າຍອື່ນໆ;
4. ທາງດ້ານ ຊື່ສຽງ, ກຽດສັກສີ: ຟື້ນຟູຄືນ ຊື່ສຽງ, ກຽດສັກສີ ດ້ວຍການຂໍໂທດ, ການແກ້ຂ່າວຜ່ານສື່ມວນຊົນ, ຈ່າຍຄ່າປ່ວຍການ;
5. ທາງດ້ານຈິດໃຈ: ການຟື້ນຟູ, ປົວແປງຈິດໃຈ ດ້ວຍການຈ່າຍເງິນ, ສູ່ຂວັນ ຫຼື ດ້ວຍຮູບການອື່ນຕາມຄວາມເໝາະສົມ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນຫຼັກການ ໃນກຳນົດຄ່າເສຍຫາຍແຕ່ລະປະເພດທີ່ເກີດຂຶ້ນ.
ຕົວຢ່າງ	**1. ກ** ຂັບລົດແລ່ນດ້ວຍຄວາມໄວແລ້ວໄປຕຳ **ຂ** ທີ່ພວມຂີ່ລົດຈັກ ໄດ້ເຮັດ **ຂ** ຟັ້ງເຂົ້າໄປໃນເຮືອນຂອງ **ຄ** ເຮັດໃຫ້ **ຂ** ບາດເຈັບສາຫັດ ຈຶ່ງໄດ້ນຳສົ່ງ **ຂ** ໄປໂຮງໝໍ ແລ້ວ **ຂ** ກໍເສຍຊີດວິດທີ່ໂຮງໝໍ. **ງ** (ໂຈດທາງແພ່ງ1) ພໍ່ຂອງ **ຂ** ໄດ້ຮຽກຮ້ອງຄ່າເສຍຫາຍມີ: ຄ່າມ້ຽນສົ່ງສະການ, ຄ່າໃຊ້ຈ່າຍງັນເຮືອນດີ ແລະ ກິນທານ ຈຳນວນ 30.000.000 ກີບ, ຄ່າປິ່ນປົວ ຈຳນວນ 10.000.000 ກີບ, ຄ່າປົວແປງຈິດໃຈ ຈຳນວນ 20.000.000 ກີບ ລວມເປັນ ຈຳນວນ 60.000.000 ກີບ, **ຄ** (ໂຈດທາງແພ່ງ2) ຄ່າສ້ອມແປງຕູ້ແກ້ວ,

	ກຳແພງເຮືອນ, ປະຕູຮົ້ວ ແລະ ຄ່າທຳຂວັນ ຈຳນວນ 10.000.000 ກີບ. ຜ່ານການພິຈາລະນາເຫັນວ່າ: ໃຫ້ **ກ** ຮັບຜິດຊອບຄ່າເສຍຫາຍທາງແພ່ງເປັນເງິນ ຈຳນວນ 30.000.000 ກີບໃຫ້ແກ່ **ງ** (ໂຈດທາງແພ່ງ1) ພໍ່ຂອງ **ຂ** ແລະ **ຄ** (ໂຈດທາງແພ່ງ2) ເປັນເງິນ 9.000.000 ກີບ. **2. ກ** ໄດ້ໂຄສະນາໃສ່ຮ້າຍປ້າຍໂດຍຫາຄວາມບໍ່ຈິງໃຫ້ແກ່ **ຂ** ທາງໂທລະພາບ, ໜັງສືພິມ, ວາລະສານ ແລະ ຮູບການອື່ນໆ ເຮັດໃຫ້ **ຂ** ເສຍຜົນປະໂຫຍດ, ຊື່ສຽງ, ກຽດສັກສີ, ຕໍ່ການກະທຳດັ່ງກ່າວ **ກ** ຕ້ອງຮັບຜິດຊອບ. **3. ກ** ໄດ້ຂີ່ລົດຕຳ **ຂ** ເຮັດໃຫ້ **ຂ** ແຂນຫັກ ບໍ່ສາມາດເຮັດວຽກໄດ້ ຊຶ່ງ **ຂ** ມີອາຊີບເປັນກຳມະກອນ ຕັດຫຍິບມີລາຍໄດ້ເດືອນລະ ຈຳນວນ 900,000 ກີບ ຕາມການຢັ້ງຢືນຂອງໂຮງງານທີ່ກ່ຽວຂ້ອງ, ກໍລະນີດັ່ງກ່າວ **ກ** ຕ້ອງໄດ້ຮັບຜິດຊອບຄ່າປິ່ນປົວໃຫ້ຫາຍປົກກະຕິ ພ້ອມກັນນັ້ນຍັງຕ້ອງໄດ້ໃຊ້ແທນຄ່າປ່ວຍການໃຫ້ **ຂ** ເດືອນລະ ຈຳນວນ 900,000 ກີບ ແລະ ຄ່າປ່ວຍການຊັບສິ່ງຂອງ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ ໄດ້ຂຽນຂຶ້ນມາໃໝ່ ຊຶ່ງກົດໝາຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ປີ 2008, ມາດຕາ 91 ວັກ 1 ແລະ 3 ການຄິດໄລ່ການໃຊ້ແທນຄ່າເສຍຫາຍ ແລະ ຄ່າປ່ວຍການ ໄດ້ກຳນົດສະເພາະແຕ່ການຄິດໄລ່ການໃຊ້ແທນຄ່າເສຍຫາຍ ແລະ ຄ່າປ່ວຍການ ຊຶ່ງບໍ່ໄດ້ກຳນົດລະອຽດກ່ຽວກັບ **ການກຳນົດຄ່າເສຍຫາຍແຕ່ລະປະເພດ** ເພາະການເສຍຫາຍ ແລະ ການໃຊ້ຈ່າຍຄ່າຕ່າງໆ ຂອງແຕ່ລະປະເພດມີຄວາມແຕກຕ່າງກັນ ຈຳເປັນຈຶ່ງໄດ້ກຳນົດຂຶ້ນມາໃໝ່.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 709, 710 ແລະ 723 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ; ມາດຕາ 609 - 610 ຂອງປະມວນກົດໝາຍແພ່ງຫວຽດນາມ; ມາດຕາ 443 - 444 ຂອງປະມວນກົດໝາຍແພ່ງ ແລະ ພານິດໄທ; ມາດຕາ 760 - 762 ຂອງປະມວນກົດໝາຍແພ່ງກຳປູເຈຍ.
ມາດຕາອ້າງອີງ	ມາດຕາ 476 - 479 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 481 ການຄິດໄລ່ຄ່າເສຍຫາຍ

ການຄິດໄລ່ຄ່າເສຍຫາຍ ຕ້ອງໃຫ້ສອດຄ່ອງກັບລັກສະນະການລະເມີດ.

ໃນກໍລະນີຜູ້ຖືກເສຍຫາຍຫາກມີສ່ວນໃນການລະເມີດ ຜູ້ກ່ຽວກໍຕ້ອງມີສ່ວນຮັບຜິດຊອບຕໍ່ຄວາມເສຍຫາຍທີ່ເກີດຂຶ້ນຄືກັນ.

ໃນກໍລະນີຜູ້ຖືກເສຍຫາຍເອງ ຫາກເປັນຜູ້ລະເມີດ ຄວາມເສຍຫາຍທີ່ເກີດຂຶ້ນທັງໝົດ ຜູ້ກ່ຽວກໍຕ້ອງຮັບຜິດຊອບເອງ.

ການຄິດໄລ່ຄ່າເສຍຫາຍ ໃຫ້ອີງໃສ່ຄວາມເສຍຫາຍຕົວຈິງ.

ຈຸດປະສົງ	ເພື່ອກຳນົດຫຼັກການ ເງື່ອນໄຂຄວາມຮັບຜິດຊອບກ່ຽວກັບການຄິດໄລ່ຄ່າເສຍຫາຍ.
ຕົວຢ່າງ	**1. ກ** ຂັບລົດລ່ວງລະເມີດກົດຈະລາຈອນ ໄປຕຳກັບລົດຂອງ **ຂ** ເຮັດໃຫ້ **ຂ** ບາດເຈັບສາຫັດ ຈຶ່ງໄດ້ນຳສົ່ງໂຮງໝໍ ຕໍ່ມາ **ຂ** ໄດ້ເສຍຊີວິດ, **ກ** ຕ້ອງຮັບຜິດຊອບໃຊ້ແທນຄ່າເສຍຫາຍ, ຄ່າມ້ຽນຄາບສົງສະການ, ທຳບຸນກິນທານ, ຄ່າປົວແປງຈິດໃຈແລະຄ່າສິ້ນເປືອງອື່ນໆ ພ້ອມທັງສ້ອມແປງລົດຂອງ **ຂ** ໃຫ້ຄືນສະພາບເດີມ. **2. ກ** ໄດ້ໂຄສະນາໃສ່ຮ້າຍປ້າຍໂດຍຫາຄວາມບໍ່ຈິງໃຫ້ແກ່ **ຂ** ທາງໂທລະພາບ, ໜັງສືພິມ, ວາລະສານ ແລະ ຮູບການອື່ນໆ ເຮັດໃຫ້ **ຂ** ເສຍຜົນປະໂຫຍດ, ຊື່ສຽງ, ກຽດສັກສີ, ຊຶ່ງ **ຂ** ໄດ້ຮຽກຮ້ອງຈ່າຍຄ່າປ່ວຍການ ແລະ ຄ່າປັບໃໝ ຈຳນວນ 30.000.000 ກີບ, ໃນກໍລະນີດັ່ງກ່າວ **ກ** ຕ້ອງຮັບຜິດຊອບ.

	3. ກ ໄດ້ຂີ່ລົດຕຳ **ຂ** ເຮັດໃຫ້ **ຂ** ແຂນຫັກ ບໍ່ສາມາດເຮັດວຽກໄດ້ ຊຶ່ງ **ຂ** ມີອາຊີບເປັນກຳມະກອນຕັດຫຍິບມີລາຍໄດ້ເດືອນລະ ຈຳນວນ900.000 ກີບ ຕາມການຢັ້ງຢືນຂອງໂຮງງານທີ່ກ່ຽວຂ້ອງ,ກໍລະນີດັ່ງກ່າວ **ກ** ຕ້ອງໄດ້ຮັບຜິດຊອບຄ່າປິ່ນປົວໃຫ້ຫາຍປົກກະຕິ ພ້ອມກັນນັ້ນຍັງຕ້ອງໄດ້ໃຊ້ແທນຄ່າປ່ວຍການໃຫ້ **ຂ** ເດືອນລະ ຈຳນວນ 900.000 ກີບ ແລະ ປ່ວຍການຊັບສິ່ງຂອງ. **4.** ລົດຂອງ **ກ** ແລະ **ຂ** ຕຳກັນ. ເຮັດໃຫ້ລົດຂອງ **ກ** ເປ່ເພ ຄ່າສ້ອມແປງຕົວຈິງມີມູນຄ່າ ຈຳນວນ 1.900.000 ກີບ, ສ່ວນລົດຂອງ **ຂ** ຄ່າສ້ອມແປງຕົວຈິງມີມູນຄ່າ ຈຳນວນ 1.300.000 ກີບ. ຜ່ານການພິຈາລະນາແລ້ວເຫັນວ່າ: **ກ** ແລະ **ຂ** ມີຄວາມຜິດເທົ່າກັນ ໝາຍຄວາມວ່າ: ທັງສອງຕ້ອງມີຄວາມຮັບຜິດຊອບຕໍ່ຄ່າເສຍຫາຍຜູ້ລະເຄັ່ງຊຶ່ງເທົ່າກັບ ຈຳນວນ 1.900.000 ກີບ + 1.300.000 ກີບ ຫານ 2 ຄົນ = ຈຳນວນ 1.600.000 ກີບ, ສະນັ້ນ, **ຂ** ຕ້ອງຈ່າຍຄ່າສ້ອມແປງສຳລັບຄວາມເສຍຫາຍ ຈຳນວນ 300,000 ກີບ ໃຫ້ແກ່ **ກ** (ຈຳນວນ 1,900,000-1,600,000 = ຈຳນວນ 300,000 ກີບ).
ເຫດຜົນໃນການສ້າງໃໝ່	ມາດຕານີ້ ໄດ້ກຳນົດຂຶ້ນມາໃໝ່ ເນື່ອງຈາກວ່າ ໃນມາດຕາ 91 ການຄິດໄລ່ການໃຊ້ແທນຄ່າເສຍຫາຍ ແລະ ຄ່າປ່ວຍການ ຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ປີ 2008 ບໍ່ໄດ້ກຳນົດ, ຜູ້ຖືກເສຍຫາຍ ຫາກເປັນຕົ້ນເຫດກໍຄວາມເສຍຫາຍທັງໝົດ ຜູ້ກ່ຽວກໍຕ້ອງຮັບຜິດຊອບເອງ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 609 - 610 ຂອງປະມວນກົດໝາຍແພ່ງຫວຽດນາມ; ມາດຕາ 443 - 444 ຂອງປະມວນກົດໝາຍແພ່ງ ແລະ ພານິດໄທ; ມາດຕາ 760 - 762 ຂອງປະມວນກົດໝາຍແພ່ງກຳປູເຈຍ.
ມາດຕາອ້າງອີງ	ມາດຕາ 472 - 473, 476 - 480 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ກ. ຄວາມຮັບຜິດຊອບທີ່ເນື່ອງມາຈາກການລະເມີດ ຂອງຕົນເອງ

ມາດຕາ 482 ຄວາມເສຍຫາຍທີ່ເນື່ອງຈາກການນຳໃຊ້ສິດເກີນຄວນ

ບຸກຄົນໃດ ຫາກໄດ້ນຳໃຊ້ສິດຂອງຕົນເກີນຄວນໂດຍເຈດຕະນາ, ບຸກຄົນນັ້ນ ຕ້ອງຮັບຜິດຊອບໃຊ້ແທນຄ່າເສຍຫາຍ ທີ່ເນື່ອງຈາກການໃຊ້ສິດເກີນຄວນນັ້ນ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນ ຫຼັກການ ແລະ ເງື່ອນໄຂ ຄວາມຮັບຜິດຊອບ ຈາກການກະທຳໃດໜຶ່ງ ທີ່ສ້າງຄວາມເສຍຫາຍ ຈາກການນຳໃຊ້ສິດເກີນຄວນ.
ຕົວຢ່າງ	**1. ກ** ເຊົ່າເຮືອນ **ຂ** ເມື່ອໝົດກຳນົດສັນຍາເຊົ່າ **ຂ** ບໍ່ໄດ້ແຈ້ງໃຫ້ **ກ** ຮູ້ວ່າຕົນເອງໄດ້ໄປຂົນເຄື່ອງຂອງ **ກ** ອອກ ໂດຍບໍ່ໄດ້ແຈ້ງໃຫ້ຮູ້ລ່ວງໜ້າ ເຮັດໃຫ້ເຄື່ອງທີ່ຂົນອອກມາ ເຊັ່ນ: ໂທລະທັດ, ຕູ້ເຢັນ, ຕູ້ເສື້ອຜ້າ ຂອງ **ກ** ເປ່ເພເສຍຫາຍ, ຊຶ່ງໃນກໍລະນີນີ້ **ຂ** ຕ້ອງມີຄວາມຮັບຜິດຊອບ ເນື່ອງຈາກວ່າ **ຂ** ໃຊ້ສິດເກີນຄວນ. **2.** ຮ້ານອາຫານ-ບັນເທີງຂອງ **ກ** ໄດ້ຮັບອະນຸຍາດເປີດບໍລິການຢ່າງຖືກຕ້ອງ ແຕ່ໄດ້ເປີດເຄື່ອງສຽງດັງແຮງ ເຮັດໃຫ້ມີຜົນກະທົບຕໍ່ຄອບຄົວຂອງ **ຂ** ຊຶ່ງຖືກລົບກວນດ້ວຍສຽງ ຈຶ່ງນອນບໍ່ໄດ້ ແລະ ເປັນສາເຫດເຮັດໃຫ້ຜັກຜ່ອນບໍ່ພຽງພໍ, **ກ** ໃຊ້ສິດເກີນຄວນ.
ເຫດຜົນໃນການຮັກສາເນື້ອໃນເດີມ	ມາດຕານີ້ແມ່ນໄດ້ຮັກສາໄວ້ ຕາມມາດຕາ 88 ຄວາມເສຍຫາຍທີ່ເນື່ອງມາຈາກການນຳໃຊ້ສິດເກີນຄວນ ຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ປີ 2008, ເພື່ອບອກໃຫ້ຮູ້ວ່າ ການກະທຳໃດໜຶ່ງຂອງບຸກຄົນທີ່ກົດໝາຍອະນຸຍາດໃຫ້ ຄວນໃຊ້ໃນຂອບເຂດທີ່ເໝາະສົມ, ບໍ່ແຕະຕ້ອງສິດຂອງຄົນອື່ນ

	ແລະ ບໍ່ສ້າງຄວາມເສຍຫາຍໃຫ້ຄົນອື່ນ. ຕາມຫລັກການແລ້ວບຸກຄົນ ຫຼື ນິຕິບຸກຄົນ ຈະມີຄວາມຮັບຜິດຊອບທາງແພ່ງດ້ວຍຕົນເອງກໍຕໍ່ເມື່ອມີການກະທຳທີ່ຄົບເງື່ອນໄຂເຊັ່ນ: ຄວາມເສຍຫາຍ, ການກະທຳທີ່ລະເມີດກົດໝາຍ, ສາຍພົວພັນເຫດ ແລະ ຜົນ ລະຫວ່າງຄວາມເສຍຫາຍທີ່ລະເມີດກົດໝາຍ ແລະ ຄວາມຜິດ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 709 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 472, 474, 475, 480 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 483 ຄວາມຮັບຜິດຊອບຕໍ່ຄວາມເສຍຫາຍທີ່ເນື່ອງຈາກສະພາວະທີ່ຈຳເປັນ

ຄວາມເສຍຫາຍທີ່ເນື່ອງຈາກສະພາວະທີ່ຈຳເປັນ ຕ້ອງໄດ້ຮັບການໃຊ້ແທນ, ແຕ່ສານອາດພິຈາລະ ນາຕັດສິນ ໂດຍອີງໃສ່ສະພາບການຕົວຈິງ ໃຫ້ຜູ້ກະທຳ ຫຼື ບຸກຄົນທີສາມ ທີ່ໄດ້ຮັບຜົນປະໂຫຍດຈາກການກະທຳຂອງຜູ້ລະເມີດນັ້ນ ເປັນຜູ້ຮັບຜິດຊອບໃຊ້ແທນຄ່າເສຍຫາຍ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນ ຜູ້ເສຍຫາຍ ສາມາດທວງເອົາການໃຊ້ແທນຄ່າເສຍຫາຍ ຈາກຜູ້ກໍ່ຄວາມເສຍຫາຍໄດ້ ເຖິງແມ່ນວ່າ ຄວາມເສຍຫາຍດັ່ງກ່າວ ຈະເກີດຈາກການກະທຳເພື່ອຫຼີກລ່ຽງສະພາວະທີ່ຈຳເປັນກໍຕາມ, ແຕ່ຖ້າມີບຸກຄົນໃດທີ່ໄດ້ຮັບຜົນປະໂຫຍດ ຈາກການກະທຳເພື່ອຫຼີກລ່ຽງສະພາວະທີ່ຈຳ ເປັນດັ່ງກ່າວ, ກໍແມ່ນບຸກຄົນນັ້ນມີຄວາມຮັບຜິດຊອບຕໍ່ການໃຊ້ແທນຄ່າເສຍຫາຍ ດັ່ງກ່າວ.
ຕົວຢ່າງ	ກໍລະນີໄຟໄໝ້ເຮືອນຂອງ **ກ** ຊຶ່ງລົດດັບເພີງບໍ່ສາມາດເຂົ້າໄປມອດໄຟໄດ້ຍ້ອນມີທາງເຂົ້າຄັບແຄບ ໃນເວລາເກີດເຫດ ປະຊາຊົນພາກັນມ້າງຮົ້ວຂອງ **ຂ** ແລະ **ຄ** ເພື່ອໃຫ້ລົດດັບເພີງເຂົ້າໄປດັບໄຟທີ່ກຳລັງໄໝ້ເຮືອນຂອງ **ກ** ນັ້ນ, ໃນກໍລະນີນີ້ ປະຊາຊົນທີ່ມ້າງຮົ້ວຈະບໍ່ມີຄວາມຮັບຜິດຊອບ ເນື່ອງຈາກການກະທຳນັ້ນເຮັດເພື່ອປ້ອງກັນຄວາມເສຍຫາຍທີ່ຈະເກີດຂຶ້ນ. ສະນັ້ນ **ກ** ທີ່ເປັນເຈົ້າຂອງເຮືອນທີ່ໄຟໄໝ້ (ກໍຄືຜູ້ທີ່ໄດ້ຮັບຜົນປະໂຫຍດຈາກການປົກປ້ອງ) ຕ້ອງຮັບຜິດຊອບຮົ້ວຂອງ **ຂ** ແລະ **ຄ** ທີ່ຖືກມ້າງນັ້ນ.
ເຫດຜົນໃນການຮັກສາເນື້ອໃນເດີມ	ມາດຕານີ້ ແມ່ນໄດ້ຮັກສາໄວ້ ຕາມມາດຕາ 89 ຄວາມຮັບຜິດຊອບຕໍ່ຄວາມເສຍຫາຍທີ່ເນື່ອງມາຈາກສະພາວະທີ່ຈຳເປັນ ຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ປີ 2008, ເພື່ອປົກປ້ອງ ແລະ ສະກັດກັ້ນ ຄວາມເສຍຫາຍທີ່ຈະເກີດຂຶ້ນ ບໍ່ໃຫ້ແຜ່ລາມ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 450 ຂອງປະມວນກົດໝາຍແພ່ງ ແລະ ພານິດໄທ.
ມາດຕາອ້າງອີງ	ມາດຕາ 472 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 484 ຄວາມຮັບຜິດຊອບຕໍ່ຄວາມເສຍຫາຍທີ່ເນື່ອງຈາກການປ້ອງກັນຕົວເກີນຂອບເຂດ

ຄວາມເສຍຫາຍທີ່ເນື່ອງຈາກການປົກປ້ອງຜົນປະໂຫຍດຂອງ ລັດ ຫຼື ຂອງສັງຄົມ, ສຸຂະພາບ, ຊີວິດ, ສິດ ແລະ ຜົນປະໂຫຍດອັນຊອບທຳຂອງຕົນເອງ ຫຼື ຂອງບຸກຄົນອື່ນ ຊຶ່ງເປັນການປ້ອງກັນຕົວຈະບໍ່ໄດ້ຮັບຜິດຊອບຕໍ່ຄວາມເສຍຫາຍທີ່ເກີດຂຶ້ນ, ເວັ້ນເສຍແຕ່ການປ້ອງກັນຕົວເກີນຂອບເຂດ, ຜູ້ກ່ຽວຕ້ອງໃຊ້ແທນຄ່າເສຍຫາຍທີ່ເກີດຂຶ້ນນັ້ນ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນ ໃນກໍລະນີການປ້ອງກັນຕົວນັ້ນ ແມ່ນຈະບໍ່ມີຄວາມຮັບຜິດຊອບຕໍ່ການລະເມີດ; ຍົກເວັ້ນກໍລະນີ ການປ້ອງກັນຕົວເກີນຂອບເຂດ ແມ່ນມີຄວາມຮັບຜິດຊອບໃນການໃຊ້ແທນຄ່າເສຍຫາຍທີ່ເກີດຂຶ້ນ.
ຕົວຢ່າງ	**1. ກ** ໄປລັກເງິນບໍລິຈາກ ຢູ່ວັດ ແລ້ວ **ຂ** (ກອງຫຼວນບ້ານ) ໄດ້ບັງເອີນພົບເຫັນ **ກ** ກຳລັງງັດຕູ້ບໍລິຈາກເງິນ, ຕໍ່ມາ **ກ** ແລະ **ຂ** ເກີດມີການຕໍ່ສູ້ກັນ. ເຮັດໃຫ້ **ຂ** ເອົາປືນເພື່ອຈະຂົ່ມຂູ່ **ກ** ແຕ່ຜູ້ກ່ຽວພັດຍິງຖືກຈຸດສຳຄັນ ເຮັດໃຫ້ **ກ** ໄດ້ຮັບບາດເຈັບສາເຫດ. ຫຼັງຈາກນັ້ນ ໄດ້ນຳສົ່ງ **ກ** ໄປໂຮງໝໍ ແລ້ວ **ກ** ກໍ່ໄດ້ເສຍຊີວິດໃນເວລາຕໍ່ມາ. ເປັນຄວາມເສຍຫາຍທີ່ເກີນກວ່າການປ້ອງກັນຕົວ ໃນກໍລະນີນີ້ ເຫັນວ່າ **ຂ** ປ້ອງກັນຕົວເກີນຂອບເຂດ **ຂ** ຕ້ອງຮັບຜິດຊອບຕໍ່ເຫດການທີ່ເກີດຂຶ້ນ. **2. ກ** ກັບ **ຂ** ມີເລື່ອງຜິດຖຽງກັນ ກ່ຽວກັບ ການປ່ອຍນ້ຳເຂົ້ານາ ຊຶ່ງ **ກ** ໄດ້ລັກເອົານ້ຳເຂົ້ານາຕົນເອງໝົດ ບໍ່ປ່ອຍນ້ຳເຂົ້ານາຂອງ **ຂ** ເຮັດໃຫ້ **ຂ** ແລະ **ກ** ຜິດຖຽງກັນ ຈົນເຖິງຂັ້ນຕີກັນ **ຂ** ໄດ້ໃຊ້ ຈົກ (ອາວຸດ) ໄປຕີຫົວ **ກ** ເຮັດໃຫ້ **ກ** ຫົວແຕກ. ໃນກໍລະນີນີ້ ເຫັນວ່າ **ຂ** ປ້ອງກັນຕົວເກີນຂອບເຂດ **ຂ** ຕ້ອງຮັບຜິດຊອບຕໍ່ເຫດການທີ່ເກີດຂຶ້ນ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ ແມ່ນໄດ້ສ້າງຂຶ້ນມາໃໝ່ ເພື່ອປົກປ້ອງ ແລະ ຄຸ້ມຄອງຜູ້ໄດ້ຮັບຄວາມເສຍຫາຍຈາກການກະທຳຜິດຂອງຜູ້ກໍຄວາມເສຍຫາຍເນື່ອງຈາກການກະທຳຂອງຕົນເອງ ແລະ ປ້ອງກັນຕົວເກີນຂອບເຂດ ພ້ອມທັງຮັບປະກັນການທົດແທນຄ່າເສຍຫາຍທີ່ເກີດຂຶ້ນ ນອກນັ້ນ ການປ້ອງກັນຕົວເກີດຂອບເຂດ ຊຶ່ງຄວາມເສຍຫາຍເກີດຈາກສະພາວະຄວາມຈຳເປັນ ຜູ້ກໍຄວາມເສຍຫາຍ ຫຼື ຜູ້ໄດ້ຮັບຜົນປະ�โຫຍດຈະຕ້ອງຮັບຜິດຊອບທາງແພ່ງ. ເວັ້ນເສຍແຕ່ການກະທຳນັ້ນຫາກບໍ່ແມ່ນຄວາມຮັບຜິດ ຊອບຂອງຕົນເຊັ່ນ: ການປະຕິບັດໜ້າທີ່ທີ່ຖືກຕ້ອງຕາມກົດໝາຍ ຫຼື ຍ້ອນຄວາມຜິດຂອງຜູ້ເສຍຫາຍເອງ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 720 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ; ມາດຕາ 449 ຂອງປະມວນກົດໝາຍແພ່ງ ແລະ ພານິດໄທ; ມາດຕາ 52 ຂໍ້1-3 ຂອງປະມວນກົດໝາຍແພ່ງສະວິດສ.
ມາດຕາອ້າງອີງ	ມາດຕາ 36 ແລະ 196 ຂອງປະມວນກົດໝາຍອາຍາ. ມາດຕາ 474 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 485 ຄວາມຮັບຜິດຊອບຕໍ່ຄວາມເສຍຫາຍທີ່ຫຼາຍຄົນໄດ້ກໍ່ຂຶ້ນ

ເມື່ອຫຼາຍຄົນໄດ້ຮ່ວມກັນກໍ່ຄວາມເສຍຫາຍ ພວກກ່ຽວຕ້ອງຮັບຜິດຊອບຮ່ວມກັນ ໃນການໃຊ້ແທນຄ່າເສຍຫາຍທີ່ພວກຕົນໄດ້ກໍ່ຂຶ້ນນັ້ນ. ສານອາດພິຈາລະນາຕັດສິນໃຫ້ບຸກຄົນໃດໜຶ່ງ ຫຼື ຫຼາຍຄົນ ໃນຈຳນວນຜູ້ກໍ່ຄວາມເສຍຫາຍນັ້ນ ໃຊ້ແທນຄ່າເສຍຫາຍທັງໝົດກ່ອນກໍໄດ້, ແຕ່ຜູ້ກ່ຽວມີສິດທວງເອົາຄືນ ນຳບຸກຄົນທີ່ຕົນໄດ້ໃຊ້ຕາງໄປແລ້ວນັ້ນ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນ ເມື່ອຫຼາຍຄົນໄດ້ຮ່ວມກັນກໍ່ຄວາມເສຍຫາຍ ແມ່ນພາໃຫ້ມີຄວາມຮັບຜິດຊອບ,ພ້ອມທັງກຳນົດ ໃຫ້ເຫັນສາຍພົວພັນການແບ່ງຄວາມຮັບຜິດຊອບລະຫວ່າງບັນດາຜູ້ຮ່ວມກັນກໍ່ການລະເມີດ ດັ່ງກ່າວ.

ຕົວຢ່າງ	**ກ**, **ຂ**, **ຄ** ແລະ **ງ** ໄປດື່ມເບຍຢູ່ຮ້ານບັນເທີງແຫ່ງໜຶ່ງ, ຕໍ່ມາ **ຈ** ແລະ ໝູ່. ກໍໄດ້ມານັ່ງກິນເບຍໃນຮ້ານດຽວກັນ. ໃນເວລາ 23 ໂມງ: 30 ນາທີ **ກ** ໄດ້ໄປເຂົ້າຫ້ອງນໍ້າ ແລ້ວໄປຍ່າງຕຳເອົາ **ຈ** ເຮັດໃຫ້ **ຈ** ບໍ່ພໍໃຈຕໍ່ການກະທຳຂອງ **ກ. ຈ** ໄດ້ແນມເບິ່ງໜ້າ ແລະ ທ້າທາຍ **ກ.** ຫຼັງຈາກນັ້ນ **ກ** ແລະ ໝູ່ ໄດ້ຍ່າງທີ່ໂຕະຂອງ **ຈ** ແລ້ວທຸບແກ້ວເບຍໃສ່ຫົວຂອງ **ຈ** ເຮັດໃຫ້ຫົວແຕກ ແລະ ທຳຮ້າຍຮ່າງກາຍຂອງ **ຈ** ຈົນໄດ້ຮັບບາດເຈັບສາຫັດ ແລ້ວນຳສົ່ງຜູ້ກ່ຽວໄປໂຮງໝໍ ຊຶ່ງມີຄ່າປິ່ນປົວທັງໝົດ ຈຳນວນ 10.000.000 ກີບ. ໃນກໍລະນີດັ່ງກ່າວ **ກ**, **ຂ**, **ຄ** ແລະ **ງ** ຕ້ອງໄດ້ຮັບຜິດຊອບຮ່ວມກັນ ໃຫ້ແກ່ **ຈ.** ສານອາດພິຈາລະນາຕັດສິນໃຫ້ **ກ** ໃນຈຳນວນຜູ້ກໍຄວາມເສຍຫາຍນັ້ນ ໃຊ້ແທນຄ່າເສຍຫາຍທັງໝົດກ່ອນກໍໄດ້, **ກ** ມີສິດທວງເອົາຄືນນຳ **ຂ**, **ຄ**, **ງ** ທີ່ຕົນໄດ້ໃຊ້ຕາງໄປແລ້ວນັ້ນ.
ເຫດຜົນໃນການປັບປຸງ	ມາດຕານີ້ ແມ່ນໄດ້ປັບປຸງມາຈາກມາດຕາ 90 ຄວາມຮັບຜິດຊອບຕໍ່ຄວາມເສຍຫາຍທີ່ຫຼາຍຄົນໄດ້ກໍ່ຂຶ້ນ ຂອງກົດໝາຍວ່າດ້ວຍຂໍ້ຜູນພັນໃນສັນຍາ ແລະ ນອກສັນຍາ ປີ 2008, ຊຶ່ງໄດ້ປັບປຸງເນື້ອໃນບາງສ່ວນ ໂດຍປ່ຽນປະໂຫຍກຈາກຄຳວ່າ "**ບັນດາບຸກຄົນ**" ມາເປັນ "**ເມື່ອຫຼາຍຄົນໄດ້ຮ່ວມກັນກໍຄວາມເສຍຫາຍພວກກ່ຽວຕ້ອງຮັບຜິດຊອບຮ່ວມກັນ**" ເພື່ອເຮັດໃຫ້ມີຄວາມຊັດເຈນທາງດ້ານເນື້ອໃນຫຼາຍຂຶ້ນ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 719 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ; ມາດຕາ 840 ຂໍ້ 1 ແລະ 2, 830 ຂອງປະມວນກົດໝາຍແພ່ງເຢຍລະມັນ; ມາດຕາ 50 ຂໍ້ 1 - 3 ແລະ ມາດຕາ 51 ຂອງປະມວນກົດໝາຍແພ່ງ ສະວິດສ້.
ມາດຕາອ້າງອີງ	ມາດຕາ 472, 476 - 479 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ໃນການໃຊ້ແທນຄ່າເສຍຫາຍ ແມ່ນຈະມີການຄິດໄລ່ເປັນຈຳນວນເງິນ ຫຼື ວັດຖສິ່ງຂອງ ຫຼື ຟື້ນຟູສິດໃຫ້ຜູ້ໄດ້ຮັບຄວາມເສຍຫາຍ ການໃຊ້ແທນຄ່າເສຍຫາຍບໍ່ພຽງແຕ່ເປັນການລະເມີດທາງກົດໝາຍເທົ່ານັ້ນ ຜູ້ກໍ່ຄວາມເສຍຫາຍອາດຈະໄດ້ໃຊ້ແທນຄ່າອື່ນໆອີກເປັນຕົ້ນການເຮັດໃຫ້ຜູ້ອື່ນເສຍໂອກາດ ເສຍລາຍໄດ້ ຫຼື ຕ້ອງໃຊ້ແທນຄ່າປ່ວຍການຕື່ມອີກ.

ຂ. ຄວາມຮັບຜິດຊອບທີ່ເນື່ອງມາ ຈາກການລະເມີດຂອງບຸກຄົນອື່ນ, ຈາກສັດ, ຈາກວັດຖສິ່ງຂອງ ທີ່ຢູ່ໃນການຄຸ້ມຄອງ ຂອງຕົນ

ມາດຕາ 486 ຄວາມຮັບຜິດຊອບຂອງຜູ້ໃຊ້ວຽກ

ຜູ້ໃຊ້ວຽກ ຕ້ອງຮັບຜິດຊອບໃຊ້ແທນຄ່າເສຍຫາຍທີ່ຜູ້ຮັບໃຊ້ວຽກຂອງຕົນໄດ້ກໍ່ຂຶ້ນ ໃຫ້ແກ່ບຸກຄົນອື່ນໃນການປະຕິບັດໜ້າທີ່ຕາມການມອບໝາຍ.

ໃນກໍລະນີທີ່ຄວາມເສຍຫາຍ ຫາກເກີດຂຶ້ນຍ້ອນຄວາມຜິດຮ້າຍແຮງຂອງຜູ້ຮັບໃຊ້ວຽກແລ້ວ ຜູ້ກ່ຽວຕ້ອງຮັບຜິດຊອບໃຊ້ແທນຄ່າເສຍຫາຍ, ແຕ່ຜູ້ໃຊ້ວຽກນັ້ນຕ້ອງໄດ້ຈ່າຍຄ່າເສຍຫາຍນັ້ນກ່ອນ ແລ້ວຈຶ່ງທວງເອົາການທົດແທນຄ່າເສຍຫາຍ ທີ່ໄດ້ຈ່າຍໄປແລ້ວນັ້ນຄືນ ຈາກຜູ້ຮັບໃຊ້ວຽກ.

ການວານຜູ້ອື່ນໃຫ້ເຮັດວຽກ ເພື່ອຜົນປະໂຫຍດຂອງຕົນ ກໍໃຫ້ປະຕິບັດຕາມວັກທີໜຶ່ງ ຂອງມາດຕານີ້.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນຜູ້ໃຊ້ວຽກ ມີຄວາມຮັບຜິດຊອບ ກໍລະນີທີ່ຜູ້ຮັບໃຊ້ວຽກຂອງຕົນ ໄດ້ກໍໃຫ້ເກີດຄວາມເສຍຫາຍ ແກ່ບຸກຄົນອື່ນໂດຍການລະເມີດໃນຄະນະປະຕິບັດໜ້າທີ່. ທັງກຳນົດເງື່ອນໄຂ ພາໃຫ້ຜູ້ໃຊ້ວຽກມີຄວາມຮັບຜິດຊອບ, ພ້ອມທັງກຳນົດໃຫ້ເຫັນວ່າພາຍຫຼັງທີ່ຜູ້ໃຊ້ວຽກ ໄດ້ຮັບຜິດຊອບແທນ ຜູ້ຮັບໃຊ້ວຽກແລ້ວນັ້ນ ສາມາດທວງເອົາການທົດແທນຈາກ ຜູ້ຮັບໃຊ້ວຽກ.

ຕົວຢ່າງ	**1. ກ** ໃຊ້ **ຂ** ຂຶ້ນຕັດຕົ້ນພ້າວ ແຕ່ລະຫວ່າງທີ່ **ຂ** ກຳລັງຕັດຕົ້ນພ້າວຢູ່ນັ້ນ ຕົ້ນພ້າວໄດ້ລົ້ມມາໃສ່ຮົ້ວເຮືອນ ຂອງ **ຄ** ເຮັດໃຫ້ຮົ້ວເຮືອນຂອງ **ຄ** ເສຍຫາຍເລັກນ້ອຍ. ກໍລະນີນີ້ **ກ** ຕ້ອງໃຊ້ແທນຄວາມເສຍຫາຍໃຫ້ແກ່ **ຄ** ແລະ **ກ** ບໍ່ສາມາດຮຽກຮ້ອງເອົາຄ່າໃຊ້ຈ່ຍ ທີ່ໄດ້ຈ່ຍໄປນັ້ນ ຈາກ **ຂ.** ເນື່ອງຈາກວ່າ **ຂ** ບໍ່ໄດ້ກໍ່ໃຫ້ເກີດມີຄວາມຜິດຮ້າຍແຮງ. **2. ກ** ສວຍໃຊ້ລົດຂອງບໍລິສັດ **ຂ** ໄປເຮັດວຽກ ເພື່ອຕົນເອງ ໂດຍບໍ່ໄດ້ຮັບອານຸຍາດຈາກບໍລິສັດ ແຕ່ພັດເກີດອຸບັດຕິເຫດ ກໍລະນີນີ້ ບໍລິສັດຈະບໍ່ຮັບຜິດຊອບຕໍ່ຄວາມເສຍຫາຍທີ່ເກີດຂຶ້ນ. ຍ້ອນວ່າເປັນການກະທຳຂອງ **ກ** ທີ່ບໍ່ໄດ້ຢູ່ໃນການປະຕິໜ້າທີ່ ຫຼື ການມອບໝາຍຈາກບໍລິສັດ. **3. ກ** ເປັນພະນັກງານຂັບລົດຂົນສົ່ງ ຂອງບໍລິສັດ **ຂ** ໄດ້ຂັບລົດໄປສົ່ງເຄື່ອງ ແຕ່ໃນລະຫວ່າງທາງນັ້ນ ມີລົດຫັກລ້ຽວມາຢ່າງກະທັນຫັນ ເຮັດໃຫ້ **ກ** ຕ້ອງຫັກລົບໄປທາງອື່ນພາໃຫ້ຕຳໃສ່ຮົ້ວຂອງ **ຄ** ເປ່ເພ. ກໍລະນີນີ້ ຖືວ່າເປັນການກະທຳຜິດທີ່ບໍ່ຮ້າຍແຮງ ຂອງ **ກ** ແລະ **ຂ** ຕ້ອງໄດ້ຮັບຜິດຊອບ ໃຊ້ແທນຄວາມເສຍຫາຍໃຫ້ **ຄ** ແລະ ບໍ່ສາມາດຮຽກຮ້ອງຄ່າເສຍຫາຍດັ່ງກ່າວ ຄືນຈາກ **ກ.** **4. ກ** ພະນັກງານຂັບລົດຂອງ ບໍລິສັດ **ຂ, ຂ** ໄດ້ມອບໝາຍໃຫ້ **ກ** ສົ່ງສິນຄ້າໃຫ້ລູກຄ້າ, ໃນລະຫວ່າງການຂົນສົ່ງ **ກ** ໄດ້ແວ່ດື່ມເບຍຈົນເມົາ ແລະ ໄດ້ຂັບລົດໄວເກີນຂອບເຂດ ໄດ້ເຮັດໃຫ້ໄປຕຳເອົາລົດຂອງ **ຄ,** ເຮັດໃຫ້ **ຄ** ໄດ້ຮັບບາດເຈັບສາຫັດ. ໃນກໍລະນີນີ້ **ຂ** ຕ້ອງຮັບຜິດຊອບຕໍ່ຄວາມເສຍຫາຍທີ່ເກີດຂຶ້ນ ຕໍ່ **ຄ** ກ່ອນ ແລະ **ຂ** ມີສິດທວງເອົາຄ່າເສຍຫາຍນັ້ນນຳ **ກ** ຄືນ ເນື່ອງຈາກວ່າ ເປັນຄວາມຜິດອັນຮ້າຍແຮງຂອງ **ກ** ເອງ.
ເຫດຜົນໃນການຮັກສາເນື້ອໃນເດີມ	ມາດຕານີ້ແມ່ນໄດ້ຮັກສາໄວ້ຕາມມາດຕາ 92 ຄວາມຮັບຜິດຊອບຂອງຜູ້ໃຊ້ວຽກ ຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ປີ 2008, ພຽງແຕ່ປ່ຽນຄຳສັບ "**ໜັກໜ່ວງ**" ໃນວັກທີ 2 ມາເປັນຄຳວ່າ "**ຮ້າຍແຮງ**" ຄຳວ່າ "**ການຫາບຸກຄົນອື່ນໃຫ້ເຮັດວຽກ**" ຍັງລວມເຖິງ ການຢືມແຮງງານ ຈາກຫົວໜ່ວຍຜະລິດ ຫຼື ຈາກບໍລິສັດໜຶ່ງ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 715 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ; ມາດຕາ 597 ແລະ 600 ປີ 2015 ຂອງປະມວນກົດໝາຍແພ່ງຫວຽດນາມ; ມາດຕາ 841 ຂອງປະມວນກົດໝາຍແພ່ງເຢຍລະມັນ; ມາດຕາ 747 ຂອງປະມວນກົດໝາຍແພ່ງກຳປູເຈຍ.
ມາດຕາອ້າງອີງ	ມາດຕາ 115 ວັກ 2 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 487 ຄວາມຮັບຜິດຊອບຂອງພໍ່ແມ່, ຜູ້ປົກຄອງ ຫຼື ຜູ້ຄຸ້ມຄອງ

ພໍ່ແມ່, ຜູ້ປົກຄອງ ຫຼື ຜູ້ຄຸ້ມຄອງ ເຊັ່ນ ໂຮງຮຽນ, ໂຮງໝໍ ເປັນຜູ້ຮັບຜິດຊອບຕໍ່ຄວາມເສຍຫາຍທີ່ເນື່ອງຈາກຄວາມຜິດຂອງເດັກທີ່ຍັງບໍ່ທັນພົ້ນກະສຽນອາຍຸ ຫຼື ຄົນບ້າເສຍຈິດ ທີ່ຢູ່ໃນການຄຸ້ມຄອງຂອງຕົນ.

ຈຸດປະສົງ	ເພື່ອກຳນົດຄວາມຮັບຜິດຊອບ ຂອງພໍ່ແມ່, ຜູ້ປົກຄອງ ຫຼື ຜູ້ຄຸ້ມຄອງຕໍ່ຄວາມເສຍຫາຍທີ່ເກີດມາຈາກການກະທຳຂອງເດັກ ຫຼື ຜູ້ເປັນບ້າເສຍຈິດ ທີ່ຢູ່ໃນການຄຸ້ມຄອງຂອງຕົນ ແລະ ປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ໄດ້ຮັບຄວາມເສຍຫາຍ.

ຕົວຢ່າງ	**1. ກ** ອາຍຸ 10 ປີ ເຕະບານໄປຖືກປ່ອງຢ້ຽມແກ້ວຂອງເຮືອນ **ຂ** ແຕກ ຊຶ່ງເສຍຫາຍ ເປັນມູນຄ່າ ຈຳນວນ 200.000 ກີບ ດັ່ງນັ້ນ ພໍ່ແມ່ ຂອງ **ກ** ຕ້ອງໄດ້ຮັບຜິດຊອບ ໃຊ້ແທນຄ່າເສຍຫາຍຈຳນວນດັ່ງກ່າວ ໃຫ້ **ຂ**. **2. ກ** ອາຍຸ 10 ປີ ເຕະບານຢູ່ເດີນໂຮງຮຽນໃນຊົ່ວໂມງກີລາ ຊຶ່ງໄດ້ເຕະໄປຖືກປ່ອງຢ້ຽມແກ້ວເຮືອນຂອງ **ຂ** ທີ່ຢູ່ໃກ້ກັບໂຮງຮຽນເຮັດແຕກຊຶ່ງເສຍຫາຍເປັນມູນຄ່າ ຈຳນວນ 200.000 ກີບ ດັ່ງນັ້ນ ໂຮງຮຽນຂອງ **ກ** ຕ້ອງໄດ້ຮັບຜິດຊອບໃຊ້ແທນຄ່າເສຍຫາຍຈຳນວນດັ່ງກ່າວ ໃຫ້ **ຂ** ຍ້ອນວ່າ ໂຮງຮຽນ ແມ່ນ ຜູ້ຄຸ້ມຄອງ. **3. ກ** ອາຍຸ 17 ປີ ໄປຮຽນ ແລະ ຢູ່ນຳພີ່ນ້ອງ (ຜູ້ປົກຄອງ) ຢູ່ນະຄອນຫຼວງວຽງຈັນ, **ກ** ໄດ້ຂັບລົດຈັກໄປໂຮງຮຽນແລ້ວໄດ້ຕຳລົດຖີບຂອງໝູ່ເຮັດໃຫ້ລົດຖີບເປ່ເພເສຍຫາຍ ຜູ້ປົກຄອງຂອງ **ກ** ຕ້ອງໄດ້ຮັບຜິດຊອບສ້ອມແປງລົດຖີບ ແລະ ຄວາມເສຍຫາຍອື່ນ.
ເຫດຜົນໃນການຮັກສາເນື້ອໃນເດີມ	ມາດຕານີ້ ແມ່ນໄດ້ຮັກສາເນື້ອໃນ ແລະ ຫຼັກການ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 93 ຄວາມຮັບຜິດຊອບຂອງພໍ່ແມ່, ຜູ້ປົກຄອງ ຫຼື ຜູ້ຄຸ້ມຄອງ ຂອງກົດໝາຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ປີ 2008. ຄຳວ່າ **“ ຜູ້ປົກຄອງເດັກ ”** ໃນມາດຕານີ້ ໝາຍເຖິງ ຜູ້ທີ່ມີຄວາມຮັບຜິດຊອບຕໍ່ເດັກ ຄືກັນກັບພໍ່ແມ່ຂອງເດັກ (ມາດຕາ 2 ຂໍ້ 13 ກົດໝາຍວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ). ສິດ ແລະ ພັນທະຂອງຜູ້ປົກຄອງເດັກ ໄດ້ກຳນົດໃນມາດຕາ 223 ຂອງປະມວນກົດໝາຍແພ່ງ. ຄຳວ່າ “**ຜູ້ເປັນບ້າເສຍຈິດ**” ໃນມາດຕານີ້ ໝາຍເຖິງ ຜູ້ຖືກຈຳກັດ ຫຼື ຜູ້ເສຍຄວາມສາມາດທາງດ້ານການປະພຶດ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 714 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ; ມາດຕາ 429 ຂອງປະມວນກົດໝາຍແພ່ງ ແລະ ພານິດໄທ; ມາດຕາ 746 ຂອງປະມວນກົດໝາຍແພ່ງກຳປູເຈຍ; ມາດຕາ 599 ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2015; ມາດຕາ 832 ຂອງປະມວນກົດໝາຍແພ່ງເຢຍລະມັນ.
ມາດຕາອ້າງອີງ	ມາດຕາ 2 ຂໍ້ 13 ຂອງກົດໝາຍວ່າດ້ວຍ ການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ; ມາດຕາ 68, 215 ແລະ 223 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 488 ຄວາມຮັບຜິດຊອບຂອງຜູ້ເປັນເຈົ້າຂອງ ຫຼື ຜູ້ຄອບຄອງສັດ

ເຈົ້າຂອງ ຫຼື ຜູ້ຄອບຄອງສັດ ຕ້ອງຮັບຜິດຊອບຕໍ່ຄວາມເສຍຫາຍທີ່ສັດນັ້ນໄດ້ກໍ່ຂຶ້ນ ຍ້ອນຄວາມຜິດຂອງຜູ້ເປັນເຈົ້າຂອງ ຫຼື ຜູ້ຄອບຄອງສັດນັ້ນ, ເວັ້ນເສຍແຕ່ ຜູ້ເປັນເຈົ້າຂອງ ຫຼື ຜູ້ຄອບຄອງສັດ ຫາກສາມາດພິສູດໄດ້ວ່າຕົນໄດ້ໃຊ້ຄວາມລະມັດລະວັງໃນການປົກປັກຮັກສາສັດຕາມ ຊະນິດ, ປະເພດ, ນິໄສ ຫຼື ການປະ ພຶດຂອງສັດແລ້ວ ຫຼື ຍ້ອນຄວາມຜິດຂອງຜູ້ຖືກເສຍຫາຍເອງ.

ໃນກໍລະນີມີບຸກຄົນທີສາມເປັນຜູ້ກໍ່ກວນ ຫຼື ເຮັດໃຫ້ສັດສ້າງຄວາມເສຍຫາຍໃຫ້ບຸກຄົນໃດໜຶ່ງ ຜູ້ເປັນເຈົ້າຂອງ ຫຼື ຜູ້ຄອບຄອງສັດ ຕ້ອງຮັບຜິດຊອບໃຊ້ແທນຄ່າເສຍຫາຍກ່ອນ ແລ້ວຈຶ່ງທວງເອົາຄືນຈາກບຸກຄົນທີສາມນັ້ນ.

ຈຸດປະສົງ	ເພື່ອສ້າງ ໃຫ້ຜູ້ເປັນເຈົ້າຂອງສັດ ມີສະຕິ ເພື່ອບໍ່ໃຫ້ສ້າງຄວາມເສຍເຫຍ.
ຕົວຢ່າງ	**1.** ງົວ ຂອງ **ກ** ບຸກເຂົ້າຮົ້ວສວນສາລີ ຂອງ **ຂ** ເຮັດໃຫ້ຕົ້ນສາລີເສຍຫາຍເປັນມູນຄ່າ ຈຳນວນ 500.000 ກີບ. **ກ** ເຈົ້າຂອງງົວ ຕ້ອງໄດ້ຮັບຜິດຊອບທົດແທນຄ່າເສຍຫາຍນັ້ນໃຫ້ **ຂ**. **2.** **ກ** ຂັບລົດ ໄປຕາມທາງ ມີງົວນ້ອຍ ຂອງ **ຂ** ແລ່ນຕັດໜ້າລົດ **ກ** ເຮັດໃຫ້ລົດ ເກີດອຸບັດຕິເຫດ ລົດເປ່ເພເສຍຫາຍ ຄິດໄລ່ເປັນມູນຄ່າ ຈຳນວນ 2,000,000 ກີບ, ງົວນ້ອຍຕາຍ ໃນກໍລະນີດັ່ງກ່າວ **ຂ** ເຈົ້າຂອງງົວ ຕ້ອງຮັບຜິດຊອບສ້ອມແປງລົດໃຫ້ **ກ** ເນື່ອງຈາກວ່າ **ຂ** ປ່ອຍສັດລ້ຽງຊະຊາຍ ແລະ ບໍ່ປົກປັກຮັກສາງົວຂອງຕົນໃຫ້ດີ. **ກ** ຈະບໍ່ມີຄວາມຮັບຜິດຊອບຕໍ່ງົວທີ່ຕາຍນັ້ນ. **3.** **ກ** ໄດ້ລ່ານ ມ້າ ໄວ້ຢູ່ຕົ້ນໄມ້ ແຕ່ **ຂ** ຍ່າງກາຍມາ ແລະ ຄິດມ່ວນ ເອົາໄມ້ໄປແຍ່ກົ້ນມ້າ ເຮັດໃຫ້ມ້າຕົກໃຈ ດີດຂາ ຖືກແຂນ ຂອງ **ຂ** ຫັກ, ກໍລະນີນີ້ **ຂ** ຕ້ອງຮັບຜິດຊອບເອງ ຍ້ອນວ່າ **ກ** ໄດ້ຮັກສາສັດລ້ຽງຂອງຕົນເອງໄວ້ຢ່າງດີແລ້ວ ໃນກໍລະນີບຸກຄົນທີ່ ສາມ ເປັນຜູ້ກໍ່ກວນ. **4.** **ກ** ໄດ້ລ່ານງົວ ຂອງຕົນເອງໄວ້ດີແລ້ວ ແຕ່ **ຂ** ໄປປ່ອຍງົວຂອງ **ກ** ທີ່ລ່ານໄວ້ນັ້ນ ເຮັດໃຫ້ງົວ ບຸກເຂົ້າຮົ້ວໄປກິນຕົ້ນສາລີຢູ່ສວນ ຂອງ **ຄ** ເສຍຫາຍເປັນມູນຄ່າ ຈຳນວນ 500.000 ກີບ. **ກ** ເຈົ້າຂອງງົວຕ້ອງຮັບຜິດຊອບໃຊ້ແທນຄ່າເສຍຫາຍ ໃຫ້ **ຄ** ກ່ອນ ແລ້ວ **ກ** ຈຶ່ງໄປທວງເອົານຳ **ຂ** ຜູ້ປ່ອຍງົວ ໃນກໍລະນີບຸກຄົນທີສາມໄດ້ສ້າງຄວາມເສຍຫາຍ.
ເຫດຜົນໃນການປັບປຸງ	ມາດຕານີ້ ປັບປຸງມາຈາກ ມາດຕາ 94 ຄວາມຮັບຜິດຊອບຂອງຜູ້ເປັນເຈົ້າຂອງ ຫຼື ຜູ້ຄອບຄອງສັດ ຂອງກົດໝາຍວ່າດ້ວຍ ຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ປີ 2008, ຍ້ອນວ່າ ມາດຕາ 94 ກຳນົດພຽງແຕ່ຫຼັກການລວມເທົ່ານັ້ນ, ຜ່ານການຈັດຕັ້ງປະຕິບັດຕົວຈິງ ຄວາມເຂົ້າໃຈຕໍ່ມາດຕານີ້ບໍ່ມີຄວາມເປັນເອກະພາບຕໍ່ຄວາມຮັບຜິດຊອບຕໍ່ຜູ້ເປັນເຈົ້າຂອງ ຫຼື ຜູ້ຄອບຄອງສັດ; ສະນັ້ນ ຈຶ່ງໄດ້ປັບປຸງໃຫ້ມັນແຈ້ງຂຶ້ນຕື່ມ ແລະ ໄດ້ຕື່ມຂໍ້ຍົກເວັ້ນໄວ້ໃນວັກ 1 ຂອງມາດຕານີ້ ເພື່ອໃຫ້ມີຄວາມຊັດເຈນ ແລະ ຈະແຈ້ງ ໃນກໍລະນີ ທີ່ເຈົ້າຂອງ ຫຼື ຜູ້ຄອບຄອງສັດ ສາມາດພິສູດໄດ້ວ່າ ຕົນເອງໄດ້ປົກປັກຮັກສາສັດຂອງຕົນດີແລ້ວ. ນອກຈາກນີ້ ໄດ້ເພີ່ມເຕີມຫຼັກການທີ່ກ່ຽວຂ້ອງກັບ ການຍຸແຍ່ ຫຼື ກໍ່ກວນ ໃຫ້ສັດ ສ້າງຄວາມເສຍຫາຍແກ່ບຸກຄົນອື່ນ. ເຖິງຢ່າງໃດກໍຕາມ ອີງຕາມວັກ 4 ມາດຕາ 11 ຂອງກົດໝາຍວ່າດ້ວຍ ການຈະລາຈອນທາງບົກ ສະບັບປັບປຸງ ປີ 2012 ທີ່ກຳນົດວ່າຢູ່ບ່ອນທີ່ມີສັດລ້ຽງ ຫຼື ຍ້າຍສັດລ້ຽງ ຕາມເສັ້ນທາງ ຢ່າງເປັນປະຈຳ ຕ້ອງມີປ້າຍເຕືອນ ໃຫ້ລະວັງສັດ ເພື່ອໃຫ້ຜູ້ຂັບຂີ່ມີຄວາມລະມັດລະວັງ ໃນກໍລະນີເກີດອຸປະຕິເຫດ ໃນເຂດທີ່ມີປ້າຍເຕືອນນັ້ນ ຜູ້ຂັບຂີ່ຕ້ອງຮັບຜິດຊອບຕໍ່ຄວາມເສຍຫາຍທີ່ເກີດຂຶ້ນ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 718 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ; ມາດຕາ 433 ຂອງປະມວນກົດໝາຍແພ່ງ ແລະ ພານິດໄທ; ມາດຕາ 603 ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2015; ມາດຕາ 750 ຂອງປະມວນກົດໝາຍແພ່ງກຳປູເຈຍ; ມາດຕາ 833 ແລະ 834 ຂອງປະມວນກົດໝາຍແພ່ງ ເຢຍລະມັນ.
ມາດຕາອ້າງອີງ	ມາດຕາ 11 ວັກ 4 ກົດໝາຍວ່າດ້ວຍ ການຈະລາຈອນທາງບົກ ສະບັບປັບປຸງ ປີ 2012.

ຂໍ້ມູນອື່ນ ຫຼື ປະເພນີສານ	ໃນກໍລະນີ ເກີດອຸບປະຕິເຫດຢູ່ຕາມຖະໜົນ ຍ້ອນໝາແລ່ນຕັດໜ້າລົດ ເຈົ້າຂອງໝາຈະບໍ່ມີຄວາມຮັບຜິດຊອບ ເນື່ອງຈາກວ່າການຂັບຂີ່ລົດຢູ່ຕາມຖະໜົນຫົນທາງ ຜູ້ຂັບຂີ່ຕ້ອງມີຄວາມຮັບຜິດຊອບ ແລະ ລະມັດລະວັງຕາມລະບຽບການສັນຈອນ. ກໍລະນີທີ່ເກີດຂຶ້ນຫາກຜູ້ຂັບຂີ່ໄດ້ຮັບບາດເຈັບ ຫຼື ລົດເປ່ເພ ແມ່ນປົ່ນປ່ວເອງ ຫຼື ສ້ອມແປງລົດທີ່ເປ່ເພນັ້ນເອງ ຫຼື ກໍລະນີຫາກໝາເສຍຊີວິດຜູ້ເປັນເຈົ້າຂອງໝາກໍຕ້ອງຮັບຜິດຊອບເອງ. ສຳລັບຄວາມເສຍຫາຍທີ່ເກີດຈາກໝາໄປກັດຄົນ ເຈົ້າຂອງໝາຕ້ອງມີຄວາມຮັບຜິດຊອບຕໍ່ຄວາມເສຍຫາຍທີ່ເກີດຂຶ້ນ ຕາມມາດຕານີ້ ເຖິງວ່າເຈົ້າຂອງໝາຈະມີການຕິດປ້າຍເຕືອນວ່າລະວັງໝາຮ້າຍແລ້ວກໍຕາມ (ຄັດມາຈາກຄຳຖາມ-ຕອບ ຂໍ້ທີ 58 (ໜ້າ79-78) ຂອງເອກະສານສັງລວມບັນຫາວິຊາການກອງປະຊຸມໃຫຍ່ຜູ້ພິພາກສາ ຄັ້ງທີ 9 ຈັດພິມປີ 2018)

ມາດຕາ 489 ຄວາມຮັບຜິດຊອບຕໍ່ຄວາມເສຍຫາຍທີ່ເກີດຂຶ້ນຈາກວັດຖຸສິ່ງຂອງ

ຄວາມເສຍຫາຍທີ່ເກີດຂຶ້ນຈາກວັດຖຸສິ່ງຂອງໃດໜຶ່ງ ຍ້ອນຄວາມຜິດຂອງຜູ້ເປັນເຈົ້າຂອງ ຫຼື ຜູ້ຄອບຄອງນັ້ນ ຜູ້ກ່ຽວຕ້ອງຮັບຜິດຊອບໃຊ້ແທນຄ່າເສຍຫາຍດັ່ງກ່າວ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນ ກ່ຽວກັບຄວາມຮັບຜິດຊອບ ຕໍ່ຄວາມເສຍຫາຍ ທີ່ເກີດຈາກວັດຖຸສິ່ງຂອງ ຂອງເຈົ້າກຳມະສິດ ຫຼື ຜູ້ຄອບຄອງ ທີ່ເຮັດຜິດພາດ.
ຕົວຢ່າງ	ໂຖດອກໄມ້ ທີ່ຢູ່ລະບຽງຊັ້ນເທິງຂອງເຮືອນ **ກ** ຕົກລົງໃສ່ຫຼັງຄາເຮືອນ **ຂ** ທີ່ຢູ່ເຮືອນໃກ້ຄຽງກັນ; ຊຶ່ງເຮັດໃຫ້ຫຼັງຄາເຮືອນຂອງ **ຂ** ແຕກເສຍຫາຍ ໂດຍອີງຕາມການປະເມີນຄວາມເສຍຫາຍ ລວມເປັນມູນຄ່າ ຈຳນວນ 1.000.000 ກີບ, ໃນກໍລະນີນີ້ **ກ**ຕ້ອງຮັບຜິດຊອບຕໍ່ຄວາມເສຍຫາຍດັ່ງກ່າວຕາມຄວາມເສຍຫາຍຕົວຈິງ ຂອງວັດຖຸສິ່ງຂອງທີ່ໄດ້ຮັບຄວາມເສຍຫາຍ.
ເຫດຜົນໃນການຮັກສາເນື້ອໃນເດີມ	ມາດຕານີ້ ແມ່ນໄດ້ຮັກສາໄວ້ ຕາມມາດຕາ 95 ຄວາມຮັບຜິດຊອບຕໍ່ຄວາມເສຍຫາຍທີ່ເກີດຈາກວັດດຖຸສິ່ງຂອງ ຂອງກົດໝາຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ປີ 2008, ຊຶ່ງໄດ້ກຳນົດທາງດ້ານເນື້ອໃນ ແລະ ຫຼັກການເອົາໄວ້ໄດ້ຢ່າງຈະແจ້ງ ແລະ ຊັດເຈນແລ້ວ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 717 ວັກ 1 ແລະ ວັກ 3 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 490, 491 ແລະ 494 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 490 ຄວາມຮັບຜິດຊອບຕໍ່ຄວາມເສຍຫາຍຂອງເຈົ້າຂອງ ຫຼື ຜູ້ຄອບຄອງຕົ້ນໄມ້

ເຈົ້າຂອງຫຼືຜູ້ຄອບຄອງຕົ້ນໄມ້ຕ້ອງຮັບຜິດຊອບໃຊ້ແທນຄ່າເສຍຫາຍທີ່ເກີດຂຶ້ນຈາກຕົ້ນໄມ້ຂອງຕົນ ເຊັ່ນ ງ່າໄມ້ຫັກ, ໝາກໄມ້ລົ່ນ, ຕົ້ນໄມ້ລົ້ມ ແລະ ອື່ນໆ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ຄວາມຮັບຜິດຊອບ ຂອງເຈົ້າຂອງ ຫຼື ຜູ້ຄອບຄອງຕົ້ນໄມ້ ໃນກໍລະນີສ້າງຄວາມເສຍຫາຍແກ່ບຸກຄົນອື່ນ.
ຕົວຢ່າງ	**ກ** ປູກຕົ້ນໝາກພ້າວມາໄດ້ຫຼາຍປີ ແລະ ຕົ້ນໝາກພ້າວກໍ່ສູງໃຫຍ່ຢູ່ຂ້າງກຳແພງບ້ານຂອງຕົນ ຜ່ານມາໄລຍະໜຶ່ງເກີດມີຟ້າລົມຝົນຕົກແຮງ ເຮັດໃຫ້ງ່າແຫ້ງ ແລະ ໝາກພ້າວແຫ້ງຕົກລົງຖືກຄອກລົດເຮືອນຂອງ **ຂ** ທີ່ຢູ່ຕິດກັບເຮືອນຂອງ **ກ** ເຮັດໃຫ້ກະເບື້ອງແຕກຖືກລົດໃຫຍ່, ຄວາມເສຍຫາຍທີ່ເກີດຂຶ້ນນີ້ **ກ** ຕ້ອງຮັບຜິດຊອບຈ່ າຍຄ່າເສຍຫາຍໃຫ້ **ຂ** ພ້ອມທັງສ້ອມແປງຫຼັງຄາຄອກລົດ.

ເຫດຜົນໃນການສ້າງໃໝ່	ມາດຕານີ້ ສ້າງຂຶ້ນໃໝ່ ເພື່ອແກ້ໄຂຂໍ້ຂັດແຍ່ງກ່ຽວກັບຄວາມເສຍຫາຍເນື່ອງມາຈາກຕົ້ນໄມ້ ບໍ່ໄດ້ກຳນົດໄວ້ໃນກົດໝາຍ. ຄຳວ່າ **"ຜູ້ຄອບຄອງຕົ້ນໄມ້"** ໝາຍເຖິງ ຜູ້ເຝົ້າສວນ, ຜູ້ເຊົ່າ, ຜູ້ຂົນສົ່ງ (ຂົນສົ່ງຕົ້ນໄມ້ໃຫຍ່ໄປປູກ).
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 626 ຂອງປະມວນກົດໝາຍແພ່ງ ຫວຽດນາມ ປີ 2005; ມາດຕາ 604 ຂອງປະມວນກົດໝາຍແພ່ງ ຫວຽດນາມ ປີ 2015; ມາດຕາ 434 ວັກ 1,2 ຂອງປະມວນກົດໝາຍແພ່ງ ແລະ ພານິດໄທ; ມາດຕາ 717 ວັກ 2 ແລະ ວັກ 3 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 326 ວັກ 2, 327, 472, 481 ວັກ 2, 488, 489 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 491 ຄວາມຮັບຜິດຊອບຕໍ່ຄວາມເສຍຫາຍຂອງເຈົ້າຂອງເຮືອນ ຫຼື ສິ່ງປຸກສ້າງອື່ນ

ເຈົ້າຂອງ ຫຼື ຜູ້ຄຸ້ມຄອງ, ປົກປັກຮັກສາ ຫຼື ນຳໃຊ້ ເຮືອນ ຫຼື ສິ່ງປຸກສ້າງອື່ນ ຫາກປະປ່ອຍໃຫ້ເຮືອນ ຫຼື ສິ່ງປຸກສ້າງຂອງຕົນ ຫຼື ຢູ່ຄວາມຮັບຜິດຊອບຂອງຕົນນັ້ນ ພັງລົງ, ຊຸດລົງ ຍ້ອນຂາດການບົວລະບັດຮັກສາ ຊຶ່ງສ້າງຄວາມເສຍຫາຍໃຫ້ແກ່ບຸກຄົນອື່ນ ຕ້ອງຮັບຜິດຊອບຕໍ່ຄວາມເສຍຫາຍທີ່ເກີດຂຶ້ນນັ້ນ.

ຈຸດປະສົງ	ເພື່ອກຳນົດ ໃຫ້ຮູ້ ຄວາມຮັບຜິດຊອບ ຂອງ ເຈົ້າຂອງເຮືອນ ຫຼື ຜູ້ຄຸ້ມຄອງ, ປົກປັກຮັກສາ ຫຼື ນຳໃຊ້ເຮືອນ ຫຼື ສິ່ງປຸກສ້າງອື່ນ ໃນກໍລະນີສ້າງຄວາມເສຍຫາຍແກ່ບຸກຄົນອື່ນ.
ຕົວຢ່າງ	**ກ** ປຸກເຮືອນ 2 ຊັ້ນມາໄດ້ 8 ປີ ແລະ **ກ** ເອງກໍ່ບໍ່ໄດ້ບົວລະບັດຮັກສາປ່ອຍໃຫ້ເຮືອນຊຸດໂຊມລົງ, ຜ່ານມາໄລຍະໜຶ່ງໄມ້ປ້ານລົມເຮືອນຂອງ **ກ** ໄດ້ຕົກລົງໃສ່ຫຼັງຄາເຮືອນຄົວຂອງ **ຂ** ທີ່ຢູ່ຕິດກັບເຮືອນ **ກ** ນັ້ນເຮັດໃຫ້ກະເບື້ອງເຮືອນຄົວແຕກເສຍຫາຍເປັນ ຈຳນວນ 1.500.000 ກີບ **ກ** ຕ້ອງຮັບຜິດຊອບໃຊ້ແທນຄ່າເສຍຫາຍທີ່ເກີດຂຶ້ນ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ ສ້າງຂຶ້ນໃໝ່ ເພື່ອແກ້ໄຂຂໍ້ຂັດແຍ່ງກ່ຽວກັບຄວາມເສຍຫາຍທີ່ເນື່ອງມາຈາກ ສິ່ງກໍ່ສ້າງຂອງເຮືອນທີ່ກໍ່ຄວາມເສຍຫາຍໃຫ້ແກ່ບຸກຄົນອື່ນ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 434, 436 ຂອງປະມວນກົດໝາຍແພ່ງ ແລະ ພານິດໄທ; ມາດຕາ 605 ວັກທີ 1 ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2015; ມາດຕາ 717 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 492 ຄວາມຮັບຜິດຊອບຕໍ່ຄວາມເສຍຫາຍຂອງຜູ້ຮັບເໝົາກໍ່ສ້າງ

ຜູ້ຮັບເໝົາກໍ່ສ້າງ ຕ້ອງຮັບຜິດຊອບຕໍ່ຄວາມເສຍຫາຍທີ່ເກີດຂຶ້ນຈາກຄວາມບົກພ່ອງຂອງ ການກໍ່ສ້າງ ຫຼື ການຄຸ້ມຄອງປົກປັກຮັກສາຂອງຕົນ ເຊັ່ນ ການຫັກພັງຂອງສິ່ງກໍ່ສ້າງ, ວັດສະດຸກໍ່ສ້າງບໍ່ໄດ້ມາດຕະຖານ, ບໍ່ຖືກເຕັກນິກ, ການຊຸດຮ່ອງ, ການຊຸດຂຸມ, ການວາງສິ່ງກີດຂວາງ ໂດຍບໍ່ຮັບປະກັນຄວາມປອດໄພ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນກ່ຽວກັບ ການທົດແທນຄ່າເສຍຫາຍ ທີ່ເກີດຈາກຜູ້ຮັບເໝົາກໍ່ສ້າງ ຍ້ອນຄວາມບົກພ່ອງຂອງຜູ້ຮັບເໝົາກໍ່ສ້າງ ຕ້ອງມີຄວາມຮັບຜິດຊອບກັບຄວາມເສຍຫາຍທີ່ເກີດຂຶ້ນ.

ຕົວຢ່າງ	**1. ກ** ຮັບເໝົາກໍ່ສ້າງຮ່ອງນ້ຳແຄມທາງ ແຕ່ການເຮັດຝາປົກຮ່ອງນ້ຳບໍ່ໄດ້ມາດຕະຖານຈຶ່ງເຮັດໃຫ້ **ຂ** ຍ່າງໄປ ຕົກລົງຮ່ອງນ້ຳໄດ້ຮັບບາດເຈັບຂາຫັກ **ກ** ຜູ້ຮັບ ເໝົາກໍ່ສ້າງຕ້ອງໄດ້ຮັບຜິດຊອບ ປິ່ນປົວ **ຂ**. **2. ກ** ຮັບເໝົາປຸກເຮືອນຫ້ອງແຖວ 2 ຊັ້ນໃຫ້ **ຂ** (ເຈົ້າຂອງຫ້ອງແຖວ) ໃນເວລາເຮັດນັ້ນ **ກ** ໄດ້ເຮັດຫຼັງຄາຫ້ອງແຖວບໍ່ຖືກເຕັກນິກເຮັດໃຫ້ກາເບື້ອງແຕກຫັກເປັນຈຳນວນຫຼວງຫຼາຍແລະ ກາເບື້ອງທີ່ແຕກຫັກລົງນັ້ນ ໄດ້ຕົກໃສ່ **ຄ** ທີ່ກຳລັງຍ່າງກາຍມາເຮັດໃຫ້ **ຄ** ໄດ້ຮັບບາດເຈັບ ຫົວແຕກ ຄ່າປິ່ນ ປົວເປັນຈຳນວນເງິນ ຈຳນວນ 1.000.000 ກີບ ດັ່ງນັ້ນ **ກ** ຜູ້ຮັບເໝົາຕ້ອງໄດ້ຮັບຜິດຊອບທົດແທນຄ່າເສຍຫາຍທີ່ຕົນກໍ່ຂຶ້ນ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ ສ້າງຂຶ້ນໃໝ່ ເພື່ອໃຫ້ຜູ້ທີ່ຮັບເໝົາກໍ່ສ້າງຫຼືເຈົ້າຂອງກິດຈະການມີຄວາມຮັບຜິດຊອບກັບຜົນເສຍຫາຍທີ່ເກີດຈາກການກໍ່ສ້າງສິ່ງຕ່າງໆທີ່ບໍ່ໄດ້ມາດຕະຖານ ແລະ ບໍ່ປອດໄພຕໍ່ບຸກຄົນອື່ນ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 605 ວັກ 2 ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2015; ມາດຕາ 434 ຂອງປະມວນກົດໝາຍແພ່ງ ແລະ ພານິດໄທ; ມາດຕາ 836 ຂອງປະມວນກົດໝາຍແພ່ງເຢຍລະມັນ.
ມາດຕາອ້າງອີງ	ມາດຕາ 456 ແລະ 472 ຂອງປະມວນກົດໝາຍແພ່ງ; ມາດຕາ 34 ແລະ 42 ຂອງກົດໝາຍວ່າດ້ວຍການກໍ່ສ້າງ ປີ 2009.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 493 ຄວາມຮັບຜິດຊອບຕໍ່ຄວາມເສຍຫາຍທີ່ເນື່ອງຈາກຜະລິດຕະພັນ ຫຼື ສິນຄ້າ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງ ທີ່ທຳການຜະລິດ, ດຳເນີນທຸລະກິດ ຕ້ອງຮັບຜິດຊອບຕໍ່ຄວາມເສຍຫາຍທີ່ເນື່ອງຈາກຜະລິດຕະພັນ ຫຼື ສິນຄ້າ ທີ່ບໍ່ໄດ້ມາດຕະຖານ ຊຶ່ງສ້າງຄວາມເສຍຫາຍໃຫ້ແກ່ຜູ້ບໍລິໂພກ ຫຼື ຜູ້ຊົມໃຊ້.

ຈຸດປະສົງ	ເພື່ອກຳນົດຄວາມຮັບຜິດຊອບ ຄວາມເສຍຫາຍ ຂອງຜູ້ຜະລິດ, ຜະລິດຕະພັນ ແລະ ສິນຄ້າທີ່ບໍ່ໄດ້ມາດຕະຖານ ແລະ ທັງເປັນການປົກປ້ອງຜູ້ຊົມໃຊ້ ແລະ ຜູ້ບໍລິໂພກ.
ຕົວຢ່າງ	**ກ** ຜະລິດຄີມທາຜິວໜັງ ມາຂາຍ, **ຂ** ໄດ້ຊື້ຄີມດັ່ງກ່າວ ມາໃຊ້ ພາຍຫຼັງໃຊ້ໄດ້ 3 ວັນ **ຂ** ເປັນຕຸ່ມແພ້ຢ່າງແຮງ ເມື່ອ **ຂ** ໄດ້ໄປກວດ ແລະ ປິ່ນປົວຢູ່ໂຮງໝໍ ຈຶ່ງຮູ້ວ່າ ແພ້ຄີມທາຜິວດັ່ງກ່າວ ຍ້ອນຄີມນັ້ນ ບໍ່ໄດ້ມາດຕະຖານ ຕາມມາດຕະຖານ ທີ່ກຳນົດໂດຍກົມອາຫານ ແລະ ຢາ ແລະ ຕ້ອງເສຍຄ່າປິ່ນປົວ ຈຳນວນ 5.000.000 ກີບ, **ກ** ຜູ້ຜະລິດສິນຄ້າຕ້ອງໄດ້ຮັບຜິດຊອບໃຊ້ຈ່າຍຄ່າປິ່ນປົວ ໃຫ້ **ຂ**.
ເຫດຜົນໃນການສ້າງໃໝ່	ມາດຕານີ້ ສ້າງຂຶ້ນໃໝ່ ເພື່ອກຳນົດຫຼັກການກ່ຽວກັບ ຄວາມຮັບຜິດຊອບຂອງ ຜູ້ຜະລິດ,ຜູ້ດຳເນີນທຸລະກິດຕໍ່ການບໍລິໂພກຫຼືຊົມໃຊ້ສິນຄ້າເນື່ອງຈາກກົດໝາຍ ວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ປີ 2008, ບໍ່ໄດ້ກຳນົດບັນຫານີ້. **ຄຳວ່າ "ບໍ່ໄດ້ມາດຕະຖານ"** ໃນມາດຕານີ້ ໝາຍເຖິງ ຜະລິດຕະພັນ ຫຼື ສິນຄ້າ ບໍ່ສອດຄ່ອງຕາມມາດຕະຖານແຫ່ງຊາດ ແລະ ມາດຕະຖານອື່ນໆ ທີ່ກຳນົດໄວ້ ໃນກົດໝາຍສະເພາະ; ໃນນີ້ລວມທັງ ສິນຄ້າທີ່ໝົດອາຍຸ ແຕ່ຜູ້ຂາຍຍັງສືບຕໍ່ຂາຍ; ຫຼື ການໃຊ້ສານກັນບູດ ຫຼື ຟອກໂມນ ເພື່ອເຮັດໃຫ້ອາຫານບໍ່ບູດເນົ່າ ແຕ່ມີ ຜົນກະທົບຕໍ່ສຸຂະພາບ.

	ຄຳວ່າ "ດຳເນີນທຸລະກິດ" ໃນມາດຕານີ້ໝາຍເຖິງການເຄື່ອນໄຫວທຸລະກິດ ຂອງບຸກຄົນ, ນິຕິບຸກຄົນ ທີ່ດຳເນີນກິດຈະການ ກ່ຽວກັບການຜະລິດ, ການຄ້າ, ການບໍລິການ ແລະ ອື່ນໆ **ຄຳວ່າ "ຜູ້ບໍລິໂພກ"** ໃນມາດຕານີ້ໝາຍເຖິງບຸກຄົນ, ນິຕິບຸຄົນ ຫຼື ການຈັດຕັ້ງ ທີ່ຊື້ສິນຄ້າ ເພື່ອມານຳໃຊ້ **ຄຳວ່າ "ຜູ້ຊົມໃຊ້"** ໃນມາດຕານີ້ໝາຍເຖິງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຊື້ສິນຄ້າ ແລະ ນຳໃຊ້ສິນຄ້າ ແລະ ການບໍລິການຢ່າງຖືກຕ້ອງ ໂດຍບໍ່ມີຈຸດປະສົງ ທາງການຄ້າ
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງ ຂອງປະເທດອື່ນ	ມາດຕາ 608 ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2015; ມາດຕາ 751 ຂອງປະມວນກົດໝາຍແພ່ງກຳປູເຈຍ; ມາດຕາ 2 ແລະ ມາດຕາ 3 ຂອງກົດໝາຍວ່າດ້ວຍຄວາມຮັບຜິດຊອບຕໍ່ຜະລິດ ຕະພັນຂອງຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 2 ຂອງກົດໝາຍວ່າດ້ວຍ ການປົກປ້ອງຜູ້ຊົມໃຊ້ ປີ 2010; ມາດຕາ 5 ຂໍ້ 5 ແລະ ມາດຕາ 103 ຂອງກົດໝາຍວ່າດ້ວຍ ມາດຕະຖານລາວ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 494 ຄວາມຮັບຜິດຊອບຕໍ່ຄວາມເສຍຫາຍທີ່ເກີດຈາກວັດຖຸອັນຕະລາຍ

ເຈົ້າຂອງ ຫຼື ຜູ້ຄອບຄອງວັດຖຸອັນຕະລາຍ ເຊັ່ນ ພາຫະນະທີ່ແລ່ນດ້ວຍເຄື່ອງຈັກ, ລະບົບສາຍສົ່ງກະ ແສໄຟຟ້າ, ໂຮງງານຜະລິດທາງດ້ານອຸດສາຫະກຳ, ອາວຸດ, ລະເບີດ, ວັດຖຸໄວໄຟ, ສານພິດ, ສານກຳມັນ ຕະພາບລັງສີ, ສານເຄມີ ຫຼື ວັດຖຸອັນຕະລາຍອື່ນ ຕ້ອງຮັບຜິດຊອບຕໍ່ຄວາມເສຍຫາຍທີ່ເກີດຂຶ້ນ, ເວັ້ນເສຍ ແຕ່ຄວາມເສຍຫາຍນັ້ນ ຫາກບໍ່ໄດ້ເກີດຈາກຄວາມຜິດຂອງຕົນ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ກ່ຽວກັບຄວາມຮັບຜິດຊອບ ຂອງຜູ້ເປັນເຈົ້າຂອງ ຫຼື ຜູ້ຄອບຄອງ ວັດຖຸອັນຕະລາຍ ທີ່ກໍ່ຕໍ່ຄວາມເສຍຫາຍຕ້ອງໄດ້ຮັບຜິດຊອບ ແລະ ສາເຫດທີ່ພາ ໃຫ້ພົ້ນຈາກຄວາມຮັບຜິດຊອບ.
ຕົວຢ່າງ	**1. ກ** ເປັນຄົນຂາຍອາຍແກ๊ດ, **ກ** ໄດ້ນຳສິ່ງອາຍແກ๊ດໃຫ້ລູກຄ້າ **ຂ** ດ້ວຍການ ມັດຖັງແກ๊ດໃສ່ຫຼັງລົດຈັກ, ໃນເວລານຳສິ່ງນັ້ນ ຖັງແກ๊ດໄດ້ຕົກລົງ ແລ້ວ ລະເບີດຂຶ້ນ ໄປຕຳໃສ່ແວ່ນລົດຂອງ **ຄ** ແລະ ລົດຈັກ 1 ຄັນ ພາໃຫ້ເກີດ ຄວາມເສຍຫາຍເປັນເງິນ ຈຳນວນ 10,000,000 ກີບ, **ກ** ຕ້ອງຮັບຜິດຊອບ ໃຊ້ແທນຄ່າເສຍຫາຍດັ່ງກ່າວ ໃຫ້ຜູ້ທີ່ໄດ້ຮັບຄວາມເສຍຫາຍ. **2. ກ** ເມົາຢາເສບຕິດແລ້ວປີນເສົາໄຟຟ້າແຮງສູງ ທີ່ມີສິ່ງກີດຂວາງ ແລະ ປ້າຍ ເຕືອນແລ້ວຖືກໄຟຟ້າຊ໊ອດ ໄດ້ຮັບບາດເຈັບສາຫັດ, ກໍລະນີນີ້ບໍລິສັດໄຟຟ້າທີ່ ກ່ຽວຂ້ອງ ຈະບໍ່ມີຄວາມຮັບຜິດຊອບ ເນື່ອງຈາກວ່າບໍ່ແມ່ນຄວາມຜິດຂອງ ບໍລິ ສັດໄຟຟ້າ ແຕ່ຫາກແມ່ນຄວາມຜິດຂອງ ກ ຜູ້ຖືກເສຍຫາຍເອງ.
ເຫດຜົນ ໃນການສ້າງ ໃໝ່	ມາດຕານີ້ ສ້າງຂຶ້ນ ໃໝ່ ເພື່ອກຳນົດ ຄວາມ ຮັບ ຜິ ດ ຊອ ບ ຂ ອ ງ ເ ຈົ້ າ ຂ ອ ງ ຫ ຼື ຜ ູ້ ຄ ອ ບ ຄ ອ ງ ວ ັ ດ ຖ ຸ ອ ັ ນ ຕ ະ ລ າ ຍ ທ ີ ່ ກ ໍ ່ ຄ ວ າ ມ ເ ສ ຍ ຫ າ ຍ ໃ ຫ ້ ແ ກ່ ບ ຸ ກ ຄ ົ ນ ອ ື ່ ນ ບ ໍ ່ ວ ່ າ ຈ ະ ເ ປ ັ ນ ການ ເ ຈ ດ ຕ ະ ນ າ ຫ ຼ ື ບ ໍ ່ ເ ຈ ດ ຕ ະ ນ າ ກ ໍ ່ ຕ າ ມ ຕ ້ ອ ງ ມ ີ ຄ ວ າ ມ ຮ ັ ບ ຜ ິ ດ ຊ ອ ບ ຕ ໍ ່ ຄ ວ າ ມ ເ ສ ຍ ຫ າ ຍ ທ ີ ່ ເ ກ ີ ດ ຂ ຶ ້ ນ.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງ ຂອງປະເທດອື່ນ	ມາດຕາ 437 ຂອງປະມວນກົດໝາຍແພ່ງ ແລະ ພານິດໄທ; ມາດຕາ 601 ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2015.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 495 ຄວາມຮັບຜິດຊອບຕໍ່ຄວາມເສຍຫາຍຕໍ່ສິ່ງແວດລ້ອມ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ກໍ່ມົນລະພິດ ແລະ ສ້າງຄວາມເສຍຫາຍຕໍ່ສິ່ງແວດລ້ອມ, ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງນັ້ນ ຕ້ອງຢຸດເຊົາການກະທຳຂອງຕົນໂດຍທັນທີ ແລະ ຮັບຜິດຊອບຕໍ່ຄວາມເສຍຫາຍທີ່ຕົນໄດ້ກໍ່ຂຶ້ນ.

ຈຸດປະສົງ	ເພື່ອກຳນົດໃຫ້ຮັບຮູ້ ກ່ຽວກັບຄວາມຮັບຜິດຊອບຕໍ່ຄວາມເສຍຫາຍ ຕໍ່ສິ່ງແວດລ້ອມ ແລະ ບຸກຄົນອື່ນ ຊຶ່ງເປັນການກະທຳທີ່ເກີດຂຶ້ນຈາກບຸກຄົນ, ນິຕິບຸກ ຫຼື ການຈັດຕັ້ງ ແລະ ສາເຫດທີ່ພາໃຫ້ພົ້ນຈາກຄວາມຮັບຜິດຊອບ.
ຕົວຢ່າງ	**1. ກ** ເປັນເຈົ້າຂອງໂຮງງານຜະລິດນ້ຳມັນພືດ ໄດ້ປ່ອຍນ້ຳເສຍລົງແມ່ນ້ຳພາໃຫ້ສ້າງຜົນກະທົບຕໍ່ສິ່ງແວດລ້ອມພາໃຫ້ມີມົນລະພິດທາງອາກາດ, ນ້ຳເນົ່າເໝັນ ແລະ ເຮັດໃຫ້ປາທີ່ **ຂ** ລ້ຽງໄວ້ໃນກະຊັງຕາຍຈຳນວນຫຼວງຫຼາຍ, ເຮັດໃຫ້ **ຂ** ຂາດລາຍໄດ້ຈຳນວນຫຼວງຫຼາຍ; ປະຊາຊົນກໍບໍ່ສາມາດນຳໃຊ້ນ້ຳຈາກແມ່ນ້ຳນັ້ນໄດ້ ສະນັ້ນ **ກ** ເຈົ້າຂອງໂຮງງານ ຕ້ອງໄດ້ຮັບຜິດຊອບຕໍ່ຄວາມເສຍຫາຍທີ່ເກີດຂຶ້ນ. **2. ກ** ເຈົ້າຂອງບໍລິສັດຜະລິດນ້ຳຢາລ້າງຈານແຫ່ງໜຶ່ງທີ່ຜະລິດຂາຍພາຍໃນປະເທດ, ຜ່ານມາໄລຍະໜຶ່ງບັງເອີນເກີດມີ ຟ້າລົມຝົນຕົກຢ່າງໜັກ ເຮັດໃຫ້ນ້ຳຖ້ວມຢ່າງກະທັນຫັນ ເຊິ່ງເຮັດໃຫ້ ບໍລິສັດນ້ຳຢາລ້າງຈານເສຍຫາຍ, ສ່ວນນ້ຳຢາລ້າງຈານທີ່ຢູ່ໃນຖັງຜະລິດ ໄດ້ລົ້ມລົງສູ່ນ້ຳຈຳນວນຫຼາຍຖັງ ເຮັດໃຫ້ແມ່ນ້ຳໃນເຂດບໍລິເວນນັ້ນ ບໍ່ສາມາດນຳໃຊ້ໄດ້ ກໍລະນີນີ້ບໍ່ແມ່ນຄວາມຮັບຜິດຊອບເຈົ້າຂອງບໍລິສັດ ເນື່ອງຈາກວ່າເຫດການດັ່ງກ່າວແມ່ນເກີດຈາກໄພທຳມະຊາດ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ ສ້າງຂຶ້ນໃໝ່ ເພື່ອກຳນົດໃຫ້ຮູ້ກ່ຽວກັບຄວາມຮັບຜິດຊອບຂອງບຸກຄົນ, ນິຕິບຸກຄົນ ຫຼືເຈົ້າຂອງກິດການ ທີ່ສ້າງຄວາມເສຍຫາຍຕໍ່ສິ່ງແວດລ້ອມ ເນື່ອງຈາກກົດໝາຍວ່າ ດ້ວຍຂໍ້ຜູກພັກໃນສັນຍາ ແລະ ນອກສັນຍາ ປີ 2008, ບໍ່ໄດ້ກຳນົດກ່ຽວກັບບັນຫານີ້. ນອກຈາກນີ້ ການກະທຳຂອງບຸກຄົນໃດໜຶ່ງ (ຫຼື ນິຕິບຸກຄົນ) ທີ່ເປັນການສ້າງຜົນກະທົບຕໍ່ສິ່ງແວດລ້ອມຢ່າງຮ້າຍແຮງຍັງມີຄວາມຮັບຜິດຊອບທາງອາຍາຕື່ມອີກ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 602 ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2015.
ມາດຕາອ້າງອີງ	ມາດຕາ 47 ຂອງກົດໝາຍວ່າດ້ວຍສິ່ງແວດລ້ອມ; ມາດຕາ 33 ຂອງກົດໝາຍວ່າດ້ວຍນ້ຳ ແລະ ຊັບພະຍາກອນນ້ຳ ປີ 2017; ມາດຕາ 345 - 349 ແລະ 351 ຂອງປະມວນກົດໝາຍອາຍາ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ໝວດທີ 3
ການເຮັດວຽກງານແທນຜູ້ອື່ນໂດຍບໍ່ມີການມອບໝາຍ

ມາດຕາ 496 ການເຮັດວຽກແທນຜູ້ອື່ນໂດຍບໍ່ມີການມອບໝາຍ

ການເຮັດວຽກແທນຜູ້ອື່ນໂດຍບໍ່ມີການມອບໝາຍ ແມ່ນ ການທີ່ຜູ້ເຮັດວຽກແທນໄດ້ດຳເນີນວຽກໃດໜຶ່ງ ເພື່ອຜົນປະໂຫຍດຂອງບຸກຄົນອື່ນ ໂດຍບໍ່ໄດ້ຮັບການມອບໝາຍ ຈາກບຸກຄົນນັ້ນ ເຊັ່ນ ການສ້ອມແປງເຮືອນໃຫ້ຜູ້ອື່ນ ໃນເວລາເຈົ້າຂອງ ຫຼື ຜູ້ຄອບຄອງ ບໍ່ຢູ່, ການໃຊ້ໜີ້ສິນແທນ ແລະ ອື່ນໆ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ກ່ຽວກັບ ກໍລະນີທີ່ບຸກຄົນໃດໜຶ່ງ ຊຶ່ງບໍ່ມີພັນທະທາງສັນຍາ, ພັນທະອື່ນ ຫາກໄດ້ເຮັດສິ່ງໃດໜຶ່ງ ເພື່ອຜົນປະ�โຫຍດຂອງບຸກຄົນອື່ນນັ້ນ ໂດຍບໍ່ໄດ້ຮັບມອບໝາຍຈາກບຸກຄົນນັ້ນ.
ຕົວຢ່າງ	**ກ** ໄປເຮັດວຽກຢູ່ຕ່າງປະເທດ 1 ອາທິດ ຕໍ່ມາທໍ່ນ້ຳປະປາຢູ່ເຮືອນ **ກ** ແຕກ, **ຂ** ທີ່ຢູ່ຂ້າງເຮືອນເຫັນເລີຍຄິດວ່ານ້ຳຈະໄຫຼຖ້ວມເຮືອນ **ກ** ແລະ ເສຍຄ່ານ້ຳປະປາແພງ, **ຂ** ຈຶ່ງໄດ້ໂທເອີ້ນຊ່າງມາສ້ອມແປງ, ປຽນທໍ່ໃໝ່ ແລະ **ຂ** ໄດ້ຈ່າຍຄ່າສ້ອມແປງໃຫ້ຊ່າງທີ່ມາແປງປຽນທໍ່ໃນລາຄາ ຈຳນວນ 200.000 ກີບ ໃຫ້ຊ່າງກ່ອນ ແລະ ໃນກໍລະນີນີ້ຖ້າ **ກ** ກັບມາເຮືອນຕ້ອງທົດແທນເງິນຈຳນວນເງິນ ຈຳນວນ 200.000 ກີບ ໃຫ້ **ຂ** ຄືນ.
ເຫດຜົນໃນການປັບປຸງ	ມາດຕານີ້ ປັບປຸງມາຈາກມາດຕາ 96 ການເຮັດວຽກແທນຜູ້ອື່ນ ຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ປີ 2008, ໂດຍໄດ້ປັບປຸງເນື້ອໃນບາງສ່ວນເພື່ອໃຫ້ມາດຕານີ້ຈະແຈ້ງ, ຊັດເຈນຂຶ້ນ ແລະ ເຂົ້າໃຈງ່າຍ, ສອດຄ່ອງກັບສະພາບຕົວຈິງ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 697 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 497 ແລະ 498 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 497 ເງື່ອນໄຂຂອງການເຮັດວຽກແທນຜູ້ອື່ນໂດຍບໍ່ມີການມອບໝາຍ

ເງື່ອນໄຂຂອງການເຮັດວຽກແທນຜູ້ອື່ນໂດຍບໍ່ມີການມອບໝາຍ ມີ ດັ່ງນີ້:

1. ບໍ່ໄດ້ຮັບມອບໝາຍຈາກຜູ້ເປັນເຈົ້າຂອງ ຫຼື ຜູ້ຄອບຄອງ;
2. ຕ້ອງດຳເນີນໄປດ້ວຍເຈດຕະນາດີ;
3. ເພື່ອຜົນປະ�โຫຍດຂອງຜູ້ເປັນເຈົ້າຂອງ ຫຼື ຜູ້ຄອບຄອງ;
4. ຕ້ອງປະຕິບັດໃຫ້ສອດຄ່ອງກັບຄວາມສາມາດ ແລະ ເງື່ອນໄຂຂອງຕົນ;
5. ຕ້ອງປະຕິບັດວຽກດັ່ງກ່າວຄືກັບເປັນວຽກຂອງຕົນເອງ;
6. ປະຕິບັດໃຫ້ສອດຄ່ອງກັບຄວາມຕັ້ງໃຈຂອງຜູ້ເປັນເຈົ້າຂອງ ຫຼື ຜູ້ຄອບຄອງ ຖ້າຜູ້ກ່ຽວຫາກຮູ້ ຫຼື ສາມາດຄາດຄະເນໄດ້.

ຈຸດປະສົງ	ເພື່ອກຳນົດ ເງື່ອນໄຂຂອງຜູ້ເຮັດວຽກແທນຜູ້ອື່ນ ໂດຍບໍ່ມີການມອບໝາຍໃຫ້.
ຕົວຢ່າງ	**ກ** ໄປທ່ຽວຕ່າງປະເທດ 2 ອາທິດ, ກ່ອນການອອກເດີນທາງໄປທ່ຽວ **ກ** ຮູ້ສຶກກັງວົນກ່ຽວກັບການບຸກລຸກເຮືອນ, ຜ່ານມາ 2 ວັນ ໄດ້ມີຕົ້ນໄມ້ແຄມທາງລົ້ມທັບໃສ່ຮົ້ວຂອງ **ກ** ຫັກ ເຮັດໃຫ້ຮົ້ວເປັນວ່າງໃຫຍ່, **ຂ** ຢູ່ຂ້າງບ້ານເຫັນຈຶ່ງໄດ້ຊື້ສັງກະສີມາອ້ອມຮົ້ວໄວ້ໃຫ້ **ກ** ກ່ອນຕາມຄວາມສາມາດທີ່ຕົນເຮັດໄດ້, ເພາະ **ຂ** ຄິດຢ້ານມີຄົນເຂົ້າໄປລັກເຄື່ອງໃນເຮືອນຂອງ **ກ**, ຈຶ່ງເຮັດຮົ້ວຊົ່ວຄາວໃຫ້ກ່ອນ.
ເຫດຜົນໃນການປັບປຸງ	ມາດຕານີ້ ປັບປຸງມາຈາກມາດຕາ 97 ເງື່ອນໄຂຂອງການເຮັດວຽກງານແທນຜູ້ອື່ນ ຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ປີ 2008, ເນື່ອງຈາກວ່າກົດໝາຍເກົ່າບໍ່ໄດ້ກຳນົດລະອຽດ ແລະ ບໍ່ໄດ້ໄຈແຍກເງື່ອນໄຂເປັນແຕ່ລະຂໍ້ ໂດຍສະເພາະ ເງື່ອນໄຂທີ 4-6 ໃນກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ປີ 2008, ບໍ່ມີຊຶ່ງເປັນເງື່ອນໄຂຈຳເປັນເຮັດໃຫ້ຜູ້ທີ່ຈະເຮັດວຽກງານໃດໜຶ່ງແທນຜູ້ອື່ນຕ້ອງຄິດ ແລະ ຕຶກຕ້ອງໃຫ້ດີ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 595 ຂອງປະມວນກົດໝາຍແພ່ງ ຫວຽດນາມ ປີ 2005; ມາດຕາ 395-396 ຂອງປະມວນກົດໝາຍແພ່ງ ແລະ ພານິດໄທ; ມາດຕາ 697 ຂອງປະມວນກົດໝາຍແພ່ງ ຍີ່ປຸ່ນ.

ມາດຕາອ້າງອີງ	ມາດຕາ 496 ແລະ 498 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 498 ພັນທະຂອງຜູ້ເຮັດວຽກແທນຜູ້ອື່ນໂດຍບໍ່ມີການມອບໝາຍ

ຜູ້ເຮັດວຽກແທນຜູ້ອື່ນໂດຍບໍ່ມີການມອບໝາຍ ມີພັນທະ ດັ່ງນີ້:

1. ຕ້ອງແຈ້ງການເຮັດວຽກແທນ ແລະ ຜົນຂອງການເຮັດວຽກຂອງຕົນໃຫ້ຜູ້ເປັນເຈົ້າຂອງ ຫຼື ຜູ້ຄອບຄອງຊາບ ໃນທັນທີ;
2. ຕ້ອງສືບຕໍ່ເຮັດວຽກໃຫ້ສຳເລັດ ຫຼື ຈົນກວ່າຜູ້ເປັນເຈົ້າຂອງ ຫຼື ຜູ້ຄອບຄອງ ຈະມີຄວາມສາມາດດຳເນີນເອງໄດ້;
3. ຕ້ອງຮັບຜິດຊອບຕໍ່ທຸກຄວາມເສຍຫາຍທີ່ເກີດຂຶ້ນໃນຂະນະທີ່ປະຕິບັດວຽກນັ້ນ.

ນອກຈາກນີ້ ໃຫ້ປະຕິບັດດັ່ງດຽວກັນກັບພັນທະຂອງຜູ້ຮັບມອບໝາຍ ຕາມທີ່ໄດ້ກຳນົດໄວ້ໃນມາດ ຕາ 448 ຂອງປະມວນກົດໝາຍສະບັບນີ້.

ຈຸດປະສົງ	ເພື່ອກຳນົດພັນທະຂອງຜູ້ເຮັດວຽກແທນຜູ້ອື່ນ ໂດຍບໍ່ມີການມອບໝາຍໃຫ້.
ຕົວຢ່າງ	**ກ** ໄດ້ໄປດາວລົດຈັກນຳບໍລິສັດ **ຂ** ກຳນົດເວລາ 1 ປີ ແລະ ພາຍຫຼັງ **ກ** ໄດ້ຈ່າຍຄ່າລົດມາ 6 ເດືອນແລ້ວ **ກ** ໄດ້ໄປເຮັດວຽກຕ່າງປະເທດ 2 ເດືອນ ພໍຮອດກຳນົດເວລາໃນການຊຳລະຄ່າລົດ **ຂ** ເຈົ້າຂອງບໍລິສັດບໍ່ເຫັນ **ກ** ເຂົ້າມາຊຳລະຄ່າລົດຈຶ່ງໄດ້ຕິດຕໍ່ຫາ ແຕ່ກໍ່ບໍ່ສາມາດຕິດຕໍ່ຫາໄດ້ **ຂ** ຈຶ່ງໄດ້ໄປເຮືອນຂອງ **ກ** ແຕ່ບໍ່ເຫັນໃຜຢູ່, **ຂ** ຈຶ່ງໄດ້ໄປສອບຖາມກັບອຳນາດການປົກຄອງບ້ານເພື່ອຕ້ອງການ ຍຶດລົດຄັນດັ່ງກ່າວຄືນ ແລະ ເມື່ອ **ຄ** ໝູ່ຮັກຂອງ **ກ** ທີ່ຢູ່ຂ້າງເຮືອນຮູ້ຈຶ່ງໄດ້ໂທບອກ **ກ** ວ່າຈະຊຳລະແທນກ່ອນ. ເມື່ອ **ກ** ເຫັນ **ຄ** ຈະຊຳລະຄ່າລົດແທນ, **ກ** ຈຶ່ງໂອນເງິນໃຫ້ **ຄ** ເພື່ອໄປຊຳລະແທນ, **ຄ** ຈຶ່ງຍິນດີປະຕິບັດສືບຕໍ່ໄປຊຳແທນ **ກ** ຈົນກວ່າ **ກ** ກັບມາ. **ຄ** ຈຶ່ງໄດ້ບອກ **ຂ** ໃນການຮັບປະກັນແທນ **ກ** ຖ້າຫາກວ່າມີຄວາມຫາຍອື່ນເກີດຂຶ້ນໃນການປະຕິບັດວຽກແທນນັ້ນ.
ເຫດຜົນໃນການປັບປຸງ	ມາດຕານີ້ ປັບປຸງມາຈາກມາດຕາ 98 ຜົນຂອງການເຮັດວຽກງານແທນຜູ້ອື່ນ ຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ປີ 2008, ເນື່ອງຈາກວ່າກົດໝາຍເກົ່າບໍ່ໄດ້ກຳນົດລະອຽດ ແລະ ບໍ່ໄດ້ໄຈແຍກເງື່ອນໄຂເປັນແຕ່ລະຂໍ້.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 595 ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2005; ມາດຕາ 395 - 396 ຂອງປະມວນກົດໝາຍແພ່ງ ແລະ ພານິດໄທ.
ມາດຕາອ້າງອີງ	ມາດຕາ 448 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 499 ພັນທະຂອງຜູ້ເປັນເຈົ້າຂອງ ຫຼື ຜູ້ຄອບຄອງ

ຜູ້ເປັນເຈົ້າຂອງ ຫຼື ຜູ້ຄອບຄອງ ມີພັນທະໃນການທົດແທນຄ່າໃຊ້ຈ່າຍຕ່າງໆທີ່ຈຳເປັນ ແລະ ມີຜົນປະໂຫຍດ ຖ້າການເຮັດວຽກແທນນັ້ນ ຫາກໄດ້ດຳເນີນໄປດ້ວຍດີ ຫຼື ຜູ້ເປັນເຈົ້າຂອງ ຫຼື ຜູ້ຄອບຄອງຫາກເຫັນດີຮັບຮອງເອົາການເຮັດວຽກແທນນັ້ນ.

ຈຸດປະສົງ	ເພື່ອກຳນົດ ໃຫ້ຜູ້ເປັນເຈົ້າຂອງຮັບຮູ້ວ່າຕົນມີພັນຕ້ອງໄດ້ທົດແທນຄືນຄ່າໃຊ້ຈ່າຍຕ່າງໆໃນການເຮັດວຽກເພື່ອຜົນປະໂຫຍດຂອງຕົນເຖິງວ່າຈະບໍ່ມີການມອບໝາຍກໍ່ຕາມ.

ຕົວຢ່າງ	**1. ກ** ໄປປະຊຸມຢູ່ຕ່າງປະເທດ 1 ອາທິດ ຕໍ່ມາທໍ່ນ້ຳປະປາຂອງເຮືອນ **ກ** ແຕກ. **ຂ** ຊຶ່ງມີເຮືອນຢູ່ຂ້າງຄຽງ ເຫັນຈຶ່ງໄດ້ເອີ້ຊາງມາສ້ອມແປງປຽນທໍ່ໃໝ່ ເພື່ອບໍ່ໃຫ້ນ້ຳໄຫຼຖ້ວມເຮືອນ **ກ** ແລະ ເຮືອນໃກ້ຄຽງ ແລະ ບໍ່ໃຫ້ **ກ** ເສຍຄ່ານ້ຳປະປາແພງ. **ກ** ຕ້ອງໄດ້ຈ່າຍຄ່າ ຊື້ອຸປະກອນໃນການແປງທໍ່ນ້ຳເຊັ່ນ ທໍ່ນ້ຳ, ຄ່າຊ້ອມແປງທີ່ໄດ້ຈ່າຍໃຫ້ຊ່າງ ຍ້ອນການຊ້ອມແປງນີ້ແມ່ນເກີດຜົນປະ�โຫຍດໃຫ້ **ກ**. **2. ກ** ໄດ້ໄປດາວລົດຈັກນຳບໍລິສັດ **ຂ** ກຳນົດເວລາ 1 ປີ ແລະ ພາຍຫຼັງ **ກ** ໄດ້ຈ່າຍຄ່າລົດມາ 6 ເດືອນແລ້ວ **ກ** ໄດ້ໄປເຮັດວຽກຕ່າງປະເທດ 2 ເດືອນ ພໍຮອດກຳນົດເວລາໃນການຊຳລະຄ່າລົດ **ຂ** ເຈົ້າຂອງບໍລິສັດບໍ່ເຫັນ **ກ** ເຂົ້າມາຊຳລະຄ່າລົດຈຶ່ງໄດ້ຕິດຕໍ່ຫາ ແຕ່ກໍ່ບໍ່ສາມາດຕິດຕໍ່ຫາໄດ້ **ຂ** ຈຶ່ງໄດ້ໄປເຮືອນຂອງ **ກ** ແຕ່ບໍ່ເຫັນໃຜຢູ່, **ຂ** ຈຶ່ງໄດ້ໄປສອບຖາມກັບອຳນາດການປົກຄອງບ້ານເພື່ອຕ້ອງການຍຶດລົດຄືນດັ່ງກ່າວຄືນແລະເມື່ອ **ຄ** ໝູ່ຮັກຂອງ **ກ** ທີ່ຢູ່ຂ້າງເຮືອນຮູ້ຈຶ່ງໄດ້ຊຳລະຄ່າລົດແທນ **ກ** ເພື່ອບໍ່ໃຫ້ **ຂ** ມາຍຶດເອົາລົດຂອງ **ກ** ທີ່ດາວມາແລະ **ຄ** ກໍ່ໄດ້ໂທບອກ **ກ** ໃນການຊຳລະແທນກ່ອນ. **ກ** ຜູ້ດາວລົດຈັກ ຕ້ອງມີພັນທະຈ່າຍເງິນຄືນໃຫ້ **ຄ** ໃນການຊຳລະໜີ້ຄ່າລົດເພື່ອບໍ່ໃຫ້ ບໍລິສັດ **ຂ** ມາຍຶດລົດຂອງ **ກ**.
ເຫດຜົນໃນການປັບປຸງ	ມາດຕານີ້ ປັບປຸງມາຈາກມາດຕາ 98 ຜົນຂອງການເຮັດວຽກງານແທນຜູ້ອື່ນ ວັກ 2 ຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ປີ 2008, ເພື່ອເຮັດໃຫ້ການຂໍ້ກຳນົດກ່ຽວກັບພັນທະຂອງຜູ້ເປັນເຈົ້າຂອງມີຂອບເຂດ ແລະ ເງື່ອນໄຂຈະແຈ້ງຂຶ້ນ ແລະ ເປັນບ່ອນອີງໃຫ້ສາມາດປະຕິບັດໄດ້ງ່າຍໃນເຫດການຕົວຈິງ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 596 ວັກ 2 ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2005; ມາດຕາ 395 - 396 ຂອງປະມວນກົດໝາຍແພ່ງ ແລະ ພານິດໄທ; ມາດຕາ 702 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 500 ການປົກປ້ອງຊີວິດ, ຊື່ສຽງ, ຊັບຂອງຜູ້ອື່ນ

ບຸກຄົນໃດ ຫາກໄດ້ກະທຳສິ່ງໃດໜຶ່ງ ເພື່ອປົກປ້ອງຊີວິດ, ຊື່ສຽງ ຫຼື ຊັບຂອງບຸກຄົນອື່ນ ຈາກໄພອັນຕະລາຍທີ່ເກີດຂຶ້ນຢ່າງກະທັນຫັນ, ບຸກຄົນນັ້ນ ຈະບໍ່ໄດ້ຮັບຜິດຊອບ ໃຊ້ແທນຄວາມເສຍຫາຍທີ່ເກີດຂຶ້ນ ແຕ່ຢ່າງໃດ, ເວັ້ນເສຍແຕ່ຄວາມເສຍຫາຍທີ່ເກີດຂຶ້ນນັ້ນ ຍ້ອນການກະທຳໂດຍເຈດຕະນາ ຫຼື ດ້ວຍຄວາມບໍ່ລະມັດລະວັງຢ່າງຮ້າຍແຮງຂອງຜູ້ກ່ຽວ.

ຈຸດປະສົງ	ເພື່ອກຳນົດກ່ຽວກັບຜູ້ທີ່ໄດ້ເຮັດສິ່ງໃດໜຶ່ງ ໃນສະຖານະການກະທັນຫັນເພື່ອຊີວິດຂອງຜູ້ອື່ນ.
ຕົວຢ່າງ	**1. ກ** ຢືນຢູ່ແຄມທາງ ແລະ ເຫັນ **ຂ** ກຳລັງຍາດຊິງເອົາກະເປົາເງິນຈາກ **ຄ, ກ** ແນມເຫັນຈຶ່ງແລ່ນເຂົ້າໄປຊ່ວຍ ໃນເວລາ **ກ** ແລ່ນໄປນັ້ນໄດ້ຕຳໃສ່ **ຂ** ລົ້ມລົງເຮັດໃຫ້ **ຂ** ແຂນບວມ ໂດຍທີ່ **ຄ** ບໍ່ໄດ້ເຈດຕະນາ ໃນເວລານີ້ **ກ** ຈະບໍ່ໄດ້ຮັບຄວາມຜິດຊອບກັບຄວາມເສຍຫາຍດັ່ງກ່າວ.

	2. ໃນກໍລະນີ **ກ** ຢືນຢູ່ແຄມທາງ ແລະ ເຫັນ **ຂ** ກຳລັງຍາດຊິງເອົາກະເປົາເງິນ ຈາກ **ຄ, ກ** ແນມເຫັນຈຶ່ງແລ່ນເຂົ້າໄປຊ່ວຍ ພ້ອມດ້ວຍຖືໄມ້ຄ້ອນ ແລ້ວເກີດ ມີການຕໍ່ສູ້ກັນເກີດຂຶ້ນ **ກ** ໄດ້ເອົາໄມ້ຄ້ອນຟາດໃສ່ **ຂ** ຫຼາຍເທື່ອ ເນື່ອງຈາກມີ ຄວາມໃຈຮ້າຍ ໃຈຂຶ້ນຕໍ່ການກະທຳຂອງ **ຂ** ແລ້ວເຮັດໃຫ້ **ຂ** ໄດ້ຮັບບາດເຈັບ ຢ່າງສະຫັດ. ໃນກໍລະນີນີ້ **ກ** ມີຄວາມເຈດຕະນາທີ່ເຮັດໃຫ້ **ຂ** ບາດເຈັບຫຼາຍ ກວ່າເຈດຕະນາທີ່ໄປຊ່ວຍເອົາກະເປົາຂອງ **ຄ** ກັບຄືນ ສະນັ້ນ **ກ** ຕ້ອງຮັບຜິ ດຊອບຕໍ່ຄວາມເສຍຫາຍທີ່ເກີດຂຶ້ນ. **3.** ໃນກໍລະນີ **ກ** ຢືນຢູ່ແຄມທາງ ແລະ ເຫັນ **ຂ** ກຳລັງຍາດຊິງເອົາກະເປົາເງິນ ຈາກ**ຄ,ກ**ແນມເຫັນແລ້ວຖືປືນແລ່ນເຂົ້າໄປຊ່ວຍ ໃນເວລານັ້ນຜູ້ກ່ຽວໄດ້ເຕະ ສະດຸດລົ້ມເຮັດໃຫ້ປືນໄດ້ລັ່ນຖືກ**ຂ**ເປັນເຫດໃຫ້**ຂ**ເສຍຊີວິດຄາທີ່ ໃນກໍລະນີ ດັ່ງກ່າວ **ກ** ຕ້ອງຮັບຜິດຊອບຕໍ່ຄວາມເສຍຫາຍທີ່ເກີດຂຶ້ນ.
ເຫດຜົນໃນການສ້າງຂຶ້ນໃໝ່	ມາດຕານີ້ ສ້າງຂຶ້ນໃໝ່ ເຫດຜົນໃນການສ້າງມາດຕານີ້ແມ່ນ ມີເຫດການເກີດ ຂຶ້ນຫຼາຍ ໃນສັງຄົມເພາະການຊ່ວຍເຫຼືອຊຶ່ງກັນ ແລະ ກັນ ຂອງຄົນໃນສັງຄົມ ແມ່ນເປັນເລື້ອງຍອມຮັບກັນໄດ້ໃນສັງຄົມ.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງ ຂອງປະເທດອື່ນ	ມາດຕາ 698 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ; ມາດຕາ 398 ຂອງປະມວນກົດໝາຍແພ່ງ ແລະ ພານິດໄທ.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ໝວດທີ 4
ການຮັບຊັບສິ່ງຂອງ ຫຼື ຜົນປະໂຫຍດທີ່ຕົນບໍ່ມີສິດ

ມາດຕາ 501 ການຮັບຊັບສິ່ງຂອງ ຫຼື ຜົນປະໂຫຍດທີ່ຕົນບໍ່ມີສິດ

ການຮັບຊັບສິ່ງຂອງ ຫຼື ຜົນປະໂຫຍດທີ່ຕົນບໍ່ມີສິດ ແມ່ນ ການເອົາຊັບສິ່ງຂອງ ຫຼື ຜົນປະໂຫຍດຂອງ ຜູ້ອື່ນມາເປັນຂອງຕົນ ໂດຍບໍ່ມີພື້ນຖານທາງກົດໝາຍ ຊຶ່ງເຮັດໃຫ້ຊັບສິ່ງຂອງ ຫຼື ຜົນປະໂຫຍດຂອງບຸກ ຄົນອື່ນຫຼຸດລົງ, ຜູ້ຮັບຕ້ອງສົ່ງຊັບສິ່ງຂອງ ຫຼື ຜົນປະໂຫຍດນັ້ນຄືນໃຫ້ຜູ້ມີສິດ.

ກໍລະນີການຮັບຊັບສິ່ງຂອງ ຫຼື ຜົນປະໂຫຍດ ທີ່ເກີດຈາກສັນຍາເປັນໂມຄະ ໃຫ້ປະຕິບັດຕາມທີ່ໄດ້ ກຳນົດໄວ້ໃນວັກທີໜຶ່ງ ຂອງມາດຕານີ້.

ຈຸດປະສົງ	ເພື່ອກຳນົດໃຫ້ຜູ້ທີ່ໄດ້ຮັບຜົນປະໂຫຍດ ທີ່ຕົນບໍ່ມີສິດ, ບໍ່ມີພື້ນຖານທາງດ້ານ ກົດໝາຍ ທີ່ໄດ້ມາຈາກການເສຍຜົນປະໂຫຍດຂອງຜູ້ອື່ນ, ບຸກຄົນນັ້ນຈະຕ້ອງ ໄດ້ສົ່ງຄືນຜົນປະໂຫຍດທີ່ໄດ້ມານັ້ນ ຕໍ່ຜູ້ເສຍຜົນປະໂຫຍດຄືນ.
ຕົວຢ່າງ	**1.** **ກ** ໄດ້ໄປເອົາເຄື່ອງທີ່ສັ່ງໄວ້ນຳ **ຂ** ແຕ່ເງິນບໍ່ພໍ **ກ** ຈຶ່ງຈ່າຍຜ່ານການໂອນເງິນໄປ ເລກບັນຊີ **ຂ** ແຕ່ບັງເອີນກົດເລກບັນຊີຜິດໂອນເຂົ້າບັນຊີຂອງ **ຄ** ຈຳນວນ 1.000.000 ກີບ **ຄ** ເຫັນວ່າໄດ້ຮັບເງິນໂອນເຂົ້າໂດຍບັງເອີນ ດັ່ງນັ້ນ **ຄ** ຕ້ອງສົ່ງເງິນຄືນໃຫ້ **ກ** ທີ່ໂອນຜິດໄປນັ້ນ. **2.** **ກ** ອາຍຸ 17 ປີ ໄດ້ຂາຍລົດໂດຍສານໃຫ້ **ຂ** ໃນລາຄາ ຈຳນວນ 30.000.000 ກີບ, ຫຼັງຈາກ **ຂ** ໄດ້ລົດມາແລ້ວ ໄດ້ເຮັດເປັນລົດໂດຍສານ ເພື່ອຮັບສົ່ງຜູ້ໂດຍສານຕາມຈຸດຕ່າງໆ ແລະ ໄດ້ເງິນຈາກການຮັບສົ່ງມາຈຳ ນວນໜຶ່ງ. ຕໍ່ມາ ພໍ່ຂອງ **ກ** ຈຶ່ງໄດ້ຮູ້ວ່າ **ກ** ເອົາລົດຕົນເອງໄປຂາຍໃຫ້ **ຂ**, ພໍ່ຂອງ **ກ** ຈຶ່ງໄດ້ມາທວງເອົາລົດຄືນນຳ **ຂ** ເພາະ **ກ** ບໍ່ໄດ້ຮັບອະນຸຍາດ ຈາກພໍ່ ແລະ **ກ** ເອງກໍບໍ່ພົ້ນກະສຽນອາຍຸ ຊຶ່ງບໍ່ຖືກຕ້ອງຕາມເງື່ອນໄຂຂອງ ການເຮັດສັນຍາ, ດັ່ງນັ້ນ ສັນຍາຊື້ຂາຍລະຫວ່າງ **ກ** ແລະ **ຂ** ຈຶ່ງເປັນໂມຄະ.

	ສະນັ້ນ, **ຂ** ຕ້ອງສົ່ງລົດ ພ້ອມທັງຜົນປະໂຫຍດທີ່ເກີດຈາກລົດຄັນດັ່ງກ່າວຄືນ ໃຫ້ແກ່ພໍ່ຂອງ **ກ**, ສ່ວນເງິນທີ່ **ກ** ໄດ້ມາຈາກການຂາຍລົດໂດຍສານ ຕ້ອງໄດ້ສົ່ງເງິນຄືນໃຫ້ **ຂ.**
ເຫດຜົນໃນການສ້າງໃໝ່	ມາດຕານີ້ ສ້າງຂຶ້ນໃໝ່ ເພື່ອອະທິບາຍພາບຂອງພາກທີ່ 3, ໝວດ 4 ມາດຕາ 99 ແລະ ມາດຕາ 100 ຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ປີ 2008, ຍ້ອນວ່າຍັງບໍ່ທັນມີຂໍ້ກຳນົດທີ່ບົ່ງບອກເຖິງການຮັບຊັບສົ່ງຂອງທີ່ຕົນບໍ່ມີສິດ ແຕ່ພຶດຕິກຳຕົວຈິງຂອງສັງຄົມພັດເກີດມີແຕ່ບໍ່ມີຂໍ້ກຳນົດກົດໝາຍອ້າງອີງເພື່ອແກ້ໄຂ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 736 ຂອງປະມວນກົດໝາຍກຳປູເຈຍ; ມາດຕາ 579 ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2015; ມາດຕາ 406 ຂອງປະມວນກົດໝາຍແພ່ງ ແລະ ພານິດໄທ; ມາດຕາ 703 ແລະ 704 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ; ມາດຕາ 812 ຂອງປະມວນກົດໝາຍແພ່ງເຢຍລະມັນ; ມາດຕາ 1376 ແລະ 1377 ຂອງປະມວນກົດໝາຍແພ່ງຝຣັ່ງ ປີ 2013.
ມາດຕາອ້າງອີງ	ມາດຕາ 28, 241 ວັກ1, 377, 395 ວັກ 4, 502, 503, 504, 505, 506, 507, 508 ແລະ 509 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 502 ການຮັບຊັບສົ່ງຂອງ ຫຼື ຜົນປະໂຫຍດທີ່ຕົນບໍ່ມີສິດດ້ວຍຄວາມຫຼົງຜິດ

ບຸກຄົນໃດ ຫາກໄດ້ຮັບຊັບສົ່ງຂອງ ຫຼື ຜົນປະໂຫຍດຂອງຜູ້ອື່ນ ດ້ວຍຄວາມຫຼົງຜິດບຸກຄົນນັ້ນ ຕ້ອງສົ່ງຊັບສົ່ງຂອງ ຫຼື ຜົນປະໂຫຍດນັ້ນຄືນໃຫ້ຜູ້ເປັນເຈົ້າຂອງ ພ້ອມທັງໝາກຜົນ ຫຼື ລາຍໄດ້, ນັບແຕ່ເວລາທີ່ໄດ້ຮັບເປັນຕົ້ນໄປ ແລະ ຜູ້ກ່ຽວກໍສາມາດຮຽກຮ້ອງເອົາຄ່າປົກປັກຮັກສາຊັບສົ່ງຂອງ ແລະ ໝາກຜົນລວມທັງມູນຄ່າທີ່ເພີ່ມຂຶ້ນຂອງຊັບສົ່ງຂອງນັ້ນ.

ຊັບສົ່ງຂອງ ຫຼື ຜົນປະໂຫຍດທີ່ນຳໃຊ້ແລ້ວໝົດໄປ, ເປ່ເພ ຫຼື ສູນຫາຍ ໃຫ້ຕີມູນຄ່າຊັບສົ່ງຂອງ ຫຼື ຜົນປະໂຫຍດນັ້ນຄືນໃຫ້ແກ່ຜູ້ເປັນເຈົ້າຂອງ, ເວັ້ນເສຍແຕ່ການສູນຫາຍ ຫຼື ເປ່ເພ ຍ້ອນເຫດສຸດວິໄສ.

ໃນກໍລະນີມີການສ້ອມແປງ, ປັບປຸງ ຫຼື ເພີ່ມເຕີມ ເຮັດໃຫ້ມູນຄ່າຂອງຊັບສົ່ງຂອງເພີ່ມຂຶ້ນ ຜູ້ເປັນເຈົ້າຂອງຊັບສົ່ງຂອງ ຕ້ອງທົດແທນຄືນມູນຄ່າໃນສ່ວນທີ່ເພີ່ມຂຶ້ນ ໃຫ້ແກ່ຜູ້ຮັບຊັບສົ່ງຂອງນັ້ນ.

ໃນກໍລະນີທີ່ໝາກຜົນນັ້ນ ຫາກໄດ້ນຳໃຊ້ແລ້ວໝົດໄປ, ເປ່ເພ ຫຼື ສູນຫາຍ ກໍ່ໃຫ້ຖືວ່າແລ້ວແກ່ກັນໄປ.

ຈຸດປະສົງ	ເພື່ອກຳນົດ ໃຫ້ຮູ້ວ່າບຸກຄົນໃດທີ່ຮັບຊັບສົ່ງຂອງຫຼືຜົນປະໂຫຍດຂອງຜູ້ອື່ນດ້ວຍຄວາມຫຼົງຜິດ ລວມທັງໝາກຜົນຂອງບຸກຄົນອື່ນຕ້ອງສົ່ງຄືນໃຫ້ຜູ້ເປັນເຈົ້າຂອງ, ແຕ່ຖ້າວ່າຊັບສົ່ງຂອງດັ່ງກ່າວຫາກໄດ້ມີການປົກປັກຮັກສາຫຼືເຮັດໃຫ້ຊັບສົ່ງຂອງມີມູນຄ່າເພີ່ມຂຶ້ນ ຜູ້ກ່ຽວສາມາດຮຽກຮ້ອງຄ່າປົກປັກຮັກສາ, ຖ້າວ່າໝາກຜົນທີ່ໃຊ້ແລ້ວໝົດ ຫຼື ເສຍຫາຍຍ້ອນເຫດສຸດວິໄສກໍ່ຖືວ່າແລ້ວກັນໄປ.
ຕົວຢ່າງ	**ກ** ແລະ **ຂ** ລ້ຽງ ເປັດ-ໄກ່ ຈຳນວນຫຼາຍ ໃກ້ກັນຊຶ່ງ ເປັດ-ໄກ່ ຂອງ **ກ** ຫຼົງຝູງໄປຢູ່ກັບ ຝູງ ເປັດ-ໄກ່ ຂອງ **ຂ,** ຊຶ່ງ **ຂ** ບໍ່ໄດ້ສັງເກດຈຶ່ງລ້ຽງເກືອ ຕາມປົກກະຕິ, ສ່ວນ **ກ** ເອງກໍ່ບໍ່ໄດ້ສັງເກດເຊັ່ນກັນ ໜຶ່ງເດືອນຕໍ່ມາ **ກ** ພົບວ່າ ເປັດ-ໄກ່ ຂອງຕົນເອງ ບໍ່ເຫັນຈຳນວນ 10 ໂຕ ຈຶ່ງໄປຖາມ **ຂ** ແລ້ວພົບວ່າ ເປັດ-ໄກ່ ຂອງ **ຂ** ເພີ້ມຂຶ້ນ 10 ໂຕ ດັ່ງນັ້ນ **ຂ** ຕ້ອງສົ່ງສັດດັ່ງກ່າວຄືນໃຫ້ແກ່ **ກ,** ຊຶ່ງ **ກ** ຕ້ອງທົດແທນຄືນຄ່າລ້ຽງເກືອ ປົກປັກຮັກສາໃຫ້ **ຂ.** ຖ້າຫາກว່າ **ຂ** ໄດ້ກິນ ເປັດ-ໄກ່, **ກ** ສາມາດທວງເອົາມູນຄ່າຂອງ ເປັດ-ໄກ່ ນຳ **ຂ**, ແຕ່ຖ້າ ເປັດ-ໄກ່ ຕາຍຍ້ອນໂລກລະບາດກ່ອນ **ກ** ມາທວງເອົາກໍ່ຖືວ່າແລ້ວກັນໄປ.

	ຖ້າ ເປັດ-ໄກ່ ເປັນພັນໄຂ່, ແລ້ວອອກໄຂ່ມາແລ້ວ **ຂ** ລາວກິນ ຫຼື ຂາຍໝົດກໍ່ຖືກວ່າແລ້ວກັນໄປ, ແຕ່ຖ້າໄຂ່ຍັງເຫຼືອ ຫຼື ຟັກອອກເປັນໂຕ **ຂ** ຕ້ອງໄດ້ສົ່ງໃຫ້ **ກ** ໃນສ່ວນທີ່ຍັງເຫຼືອຢູ່ທັງໝົດ, ແຕ່ **ກ** ກໍຕ້ອງທົດແທນຄືນຄ່າລ້ຽງເກືອທັງໝົດ.
ເຫດຜົນໃນການປັບປຸງ	ມາດຕານີ້ ປັບປຸງມາຈາກມາດຕາ 100 ການຮັບຊັບສິ່ງຂອງທີ່ຕົນບໍ່ມີສິດດ້ວຍຄວາມຫຼົງຜິດ ຂອງກົດໝາຍຂໍ້ຜູກພັນໃນ ແລະ ນອກສັນຍາ ປີ 2008, ໄດ້ກຳນົດແຕ່ຍັງບໍ່ທັນກຳນົດຊັດເຈນກ່ຽວກັບການສູນເສຍ ຫຼື ເປ່ເພ່ຍ້ອນເຫດສຸດວິໄສ, ການເຮັດໃຫ້ມູນຊັບຄ່າເພີ່ມຂຶ້ນເຈົ້າຂອງຊັບກໍຕ້ອງໄດ້ທົດແທນຄືນສວ່ນທີ່ເພີ່ມຂຶ້ນເຊັນກັນ ແລະ ສຸດທ້າຍກ່ຽວກັບການນຳໃຊ້ໝາກຜົນທີ່ໝົດໄປ ຫຼື ເສຍຫາຍແລ້ວ ບໍ່ຈຳເປັນຕ້ອງສົ່ງຄືນ ການປັບປຸງໄດ້ກຳນົດເພີ່ມຕື່ມໃຫ້ຈະແຈ້ງຂຶ້ນ ຍ້ອນວ່າກໍລະນີດັ່ງກ່າວຂ້າງເທິງອາດເກີດຂຶ້ນໄດ້ສະເໝີໃນການນຳໃຊ້ຊັບສິ່ງຂອງໂດຍບຸກຄົນ ແລະ ເພື່ອການແກ້ໄຂເຫດການດັ່ງກ່າວງ່າຍຂຶ້ນ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 601 ວັກ 2 ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2005; ມາດຕາ 413 - 418 ຂອງປະມວນກົດໝາຍແພ່ງ ແລະ ພານິດໄທ; ມາດຕາ 703 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 28 ວັກ 6, 241 ວັກ 1, 395 ວັກ 4 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 503 ການຮັບຊັບສິ່ງຂອງ ຫຼື ຜົນປະໂຫຍດທີ່ຕົນບໍ່ມີສິດໂດຍເຈດຕະນາ

ບຸກຄົນໃດຫາກໄດ້ຮັບຊັບສິ່ງຂອງ ຫຼື ຜົນປະໂຫຍດຂອງບຸກຄົນອື່ນໂດຍເຈດຕະນາ ຊຶ່ງຮູ້ວ່າຕົນບໍ່ມີສິດຮັບຊັບສິ່ງຂອງ ຫຼື ຜົນປະໂຫຍດນັ້ນ, ບຸກຄົນດັ່ງກ່າວ ຕ້ອງສົ່ງຊັບສິ່ງຂອງ ຫຼື ຜົນປະໂຫຍດນັ້ນຄືນໃຫ້ຜູ້ເປັນເຈົ້າຂອງພ້ອມທັງໝາກຜົນ ນັບແຕ່ເວລາໄດ້ຮັບເປັນຕົ້ນໄປ.

ຊັບສິ່ງຂອງ ຫຼື ຜົນປະໂຫຍດລວມທັງໝາກຜົນ ທີ່ນຳໃຊ້ແລ້ວໝົດໄປ, ເປ່ເພ ຫຼື ສູນຫາຍ ກໍໃຫ້ຕີມູນຄ່າຊັບສິ່ງຂອງ ຫຼື ຜົນປະໂຫຍດນັ້ນ ຄືນໃຫ້ແກ່ຜູ້ເປັນເຈົ້າຂອງ.

ຈຸດປະສົງ	ເພື່ອກຳນົດ ໃຫ້ຮູ້ວ່າ ບຸກຄົນໃດທີ່ຮັບຊັບສິ່ງຂອງ ຫຼື ຜົນປະໂຫຍດທີ່ບໍ່ແມ່ນຂອງຕົນລວມທັງ ໝາກຜົນຂອງບຸກຄົນອື່ນທີ່ນຳມາໃຊ້ໂດຍເຈດຕະນາ ບຸກຄົນນັ້ນຕ້ອງສົ່ງຄືນທັງໝົດໃຫ້ແກ່ຜູ້ເປັນເຈົ້າຂອງ.
ຕົວຢ່າງ	**1. ກ** ລ້ຽງເປັດ 20 ໂຕ ແລະ **ຂ** ລ້ຽງເປັດ 10 ໂຕ ໃກ້ກັນຊຶ່ງ ເປັດ ຂອງ **ກ** ຫຼົງໄປຢູ່ກັບ ຝູງເປັດ ຂອງ **ຂ** 5 ໂຕ ຊຶ່ງ **ຂ** ສັງເກດເຫັນຈຶ່ງລ້ຽງເກືອ ຕາມປົກກະຕິ, ສ່ວນ **ກ** ເອງ ພົບວ່າ ເປັດ ຂອງຕົນເອງບໍ່ເຫັນຈຳນວນ 5 ໂຕຈຶ່ງໄດ້ຊອກຫາ 1 ອາທິດ ຈຶ່ງໄປຖາມ **ຂ** ແລ້ວພົບວ່າ ເປັດ ຂອງ **ຂ** ເພີ້ມຂຶ້ນ 5 ໂຕ ດັ່ງນັ້ນ **ຂ** ຕ້ອງສົ່ງເປັດດັ່ງກ່າວຄືນໃຫ້ແກ່ **ກ,** ຊຶ່ງ **ກ** ຕ້ອງບໍ່ຕ້ອງທົດແທນຄືນຄ່າລ້ຽງເກືອ ປົກປັກຮັກສາໃຫ້ **ຂ** ເພາະລາວຮູ້ວ່າຕົນມີຊັບສິ່ງຂອງທີ່ຕົນບໍ່ມີສິດແຕ່ຕົນລາວຄວນໄປຖາມສົ່ງຄືນ. ຖ້າເປັດ ຕາຍຍ້ອນໂລກລະບາດກ່ອນ **ກ** ກໍສາມາດທວງເອົາມູນຄ່າຂອງເປັດຈຳນວນດັ່ງກ່າວ. ຖ້າເປັດເປັນພັນໄຂ່, ແລ້ວອອກໄຂ່ ຫຼື ຟັກເປັນໂຕເປັດ **ຂ** ຕ້ອງໄດ້ສົ່ງຄືນໃຫ້ **ກ** ທັງໝົດແຕ່ **ກ** ກໍຕ້ອງທົດແທນຄືນຄ່າລ້ຽງເກືອທັງໝົດ **ຂ.** **2. ກ** ສົ່ງສິນຄ້າໃຫ້ **ຂ** ຕາມທີ່ຢູ່ທີ່ **ຂ** ໄດ້ແຈ້ງໄວ້ ແຕ່ປາກົດວ່າ **ຂ** ໄດ້ຍ້າຍອອກຈາກບ່ອນຢູ່ນັ້ນແລ້ວໂດຍບໍ່ໄດ້ແຈ້ງໃຫ້ **ກ** ຮູ້ ແລະ **ຄ** ຊຶ່ງເປັນຜູ້ມາຢູ່ໃໝ່ໄດ້ຮັບເອົາສິນຄ້າດັ່ງກ່າວໂດຍອ້າງຕົນເອງວ່າເປັນ **ຂ** ໝາຍຄວາມວ່າ **ຄ** ຮັບເອົາຊັບສິ່ງຂອງທີ່ຕົນບໍ່ມີສິດໂດຍເຈດຕະນາ.

	ຄ ຕ້ອງສົ່ງສິນຄ້າດັ່ງຄືນໃຫ້ແກ່ **ຂ** ທັງໝົດ. ແຕ່ຖ້າຫາກ **ຄ** ໄດ້ນຳໃຊ້ສິນຄ້າແລ້ວ, ເປ່ເພ ຫຼື ສູນຫາຍ **ຄ** ກໍໃຫ້ຄິດໄລ່ມູນຄ່າຊັບສົ່ງຂອງນັ້ນຄືນໃຫ້ແກ່ **ຂ**.
ເຫດຜົນໃນການປັບປຸງ	ມາດຕານີ້ ປັບປຸງມາຈາກມາດຕາ 99 ການຮັບຊັບສົ່ງຂອງທີ່ຕົນບໍ່ມີສິດໂດຍເຈດຕະນາ ຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນ ແລະ ນອກສັນຍາ ປີ 2008, ເພື່ອເຮັດໃຫ້ການຂໍ້ກຳນົດ ໂດຍສະເພາະຂອບເຂດການສົ່ງຊັບສົ່ງຂອງທີ່ຕົນໄດ້ຮັບໂດຍບໍ່ມີພື້ນຖານດ້ານກົດໝາຍໂດຍເຈດຕະນາ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 600 ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2005; ມາດຕາ 413 ຂອງປະມວນກົດໝາຍແພ່ງ ແລະ ພານິດໄທ.
ມາດຕາອ້າງອີງ	ມາດຕາ 28 ວັກ 5, 241 ວັກ 2, 395 ວັກ 4 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 504 ການມອບຊັບສົ່ງຂອງທີ່ຜູ້ມອບບໍ່ມີສິດທວງຄືນ

ບຸກຄົນໃດ ຫາກໄດ້ມອບຊັບສົ່ງຂອງ ໃຫ້ຜູ້ອື່ນແລ້ວ ຈະບໍ່ມີສິດທວງເອົາຊັບສົ່ງຂອງ ຫຼື ຜົນປະ�โຫຍດນັ້ນຄືນ ໃນກໍລະນີ ດັ່ງນີ້:

1. ການປະຕິບັດພັນທະກ່ອນກຳນົດເວລາ;
2. ການປະຕິບັດພັນທະພາຍຫຼັງໝົດອາຍຸຄວາມ;
3. ການປະຕິບັດສິ່ງໃດໜຶ່ງໂດຍຮູ້ວ່າບໍ່ມີພັນທະ;
4. ການປະຕິບັດພັນທະຂອງຜູ້ອື່ນ;
5. ການປະຕິບັດພັນທະທີ່ຜິດກົດໝາຍ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ກ່ຽວກັບ ຜູ້ທີ່ໄດ້ປະຕິບັດພັນທະກ່ອນກຳນົດ, ຜູ້ທີ່ໄດ້ປະຕິບັດການໃຊ້ແທນໜີ້ສິນທັງທີ່ຮູ້ວ່າບໍ່ມີພັນທະ, ຜູ້ປະຕິບັດພັນທະຂອງຜູ້ອື່ນ, ແລະ ຜູ້ມອບຜົນປະ�โຫຍດໃດໜຶ່ງໃຫ້ແກ່ຜູ້ອື່ນໂດຍມີ ສາເຫດທີ່ຜິດກົດໝາຍນັ້ນ, ຈະບໍ່ມີສິດທວງເອົາຊັບສົ່ງຂອງ ຫຼື ຜົນປະ�โຫຍດທີ່ໄດ້ປະຕິບັດໄປນັ້ນຄືນ.
ຕົວຢ່າງ	ທ່ານສາມາດເບິ່ງຕົວຢ່າງຂອງ ມາດຕາ 505 ຫາ ມາດຕາ 509.
ເຫດຜົນໃນການສ້າງໃໝ່	ມາດຕານີ້ ສ້າງຂຶ້ນໃໝ່ ເພື່ອໃຫ້ສອດຄ່ອງກັບສະພາບຕົວຈິງ ຂອງສັງຄົມປັດຈຸບັນ ແລະ ກົດໝາຍ ທັງເປັນການແກ້ໄຂບັນຫາທີ່ເກີດຂຶ້ນໃນສັງຄົມປັດຈຸບັນ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 409 ຂອງປະມວນກົດໝາຍແພ່ງ ແລະ ພານິດໄທ; ມາດຕາ 705, 706, 707, 708 ຂອງປະມວນກົດໝາຍແພ່ງ ຍີ່ປຸ່ນ.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 505 ການປະຕິບັດພັນທະກ່ອນກຳນົດເວລາ

ບຸກຄົນໃດຫາກໄດ້ປະຕິບັດພັນທະກ່ອນກຳນົດເວລາຕາມສັນຍາຫຼືກົດໝາຍແລ້ວຜູ້ກ່ຽວບໍ່ມີສິດທວງໃຫ້ສົ່ງສິ່ງທີ່ໄດ້ປະຕິບັດໄປແລ້ວນັ້ນຄືນ, ເວັ້ນເສຍແຕ່ຜູ້ກ່ຽວຫາກຫຼົງເວລາ ໃນການປະຕິບັດພັນທະດັ່ງກ່າວ.

ຈຸດປະສົງ	ເພື່ອໃຫ້ລູກໜີ້ ພິຈາລະນາໃຫ້ດີຖ້າຈະປະຕິບັດພັນທະກອນກຳນົດເວລາແມ່ນ ຖາມເອົາຄືນໂດຍອ້າງໃສ່ກຳນົດເວລາບໍ່ໄດ້ຍົກເວັ້ນ ຫຼົງຜິດ ຫຼື ເຈົ້າໜີ້ເຫັນດີ.

ຕົວຢ່າງ	**ກ** ເປັນໜີ້ **ຂ** ຈຳນວນ 10.000.000 ກີບ ກຳນົດເວລາ ຫົກເດືອນດອກເບ້ຍ 3 % ເດືອນ, ສາມເດືອນຕໍ່ມາ **ກ** ຖືກເລກ ຍ້ອນຄວາມດີໃຈຈຶ່ງໄດ້ເອົາເງິນໄປໃຊ້ໜີ້ **ຂ** ພ້ອມດອກເບ້ຍ ຈຳນວນ 11.800.000 ກີບ, ໜຶ່ງເດືອນຕໍ່ມາຮູ້ສຶກວ່າຕົນເອງ ບໍ່ຄວນໃຊ້ໜີ້ກ່ອນ ແລະ ດອກເບ້ຍກຳຈ່າຍເຕັມ ຫົກເດືອນ ຈຶ່ງໄປຖາມເອົາເງິນ ຄືນຈາກ **ຂ** ໂດຍບອກວ່າ ເມື່ອຮອດກຳນົດເວລາຈະມາທົດແທນເງິນຄືນໃຫ້. **ກ** ບໍ່ມີສິດທອງເອົາເງິນຄືນ, ຍົກເວັ້ນ **ຂ** ຍິນຍອມ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງຂຶ້ນໃໝ່ ເພື່ອໃຫ້ສອດຄ່ອງກັບສະພາບຕົວຈິງຂອງສັງຄົມປັດຈຸບັນ ແລະ ກົດໝາຍ ທັງເປັນການແກ້ໄຂບັນຫາທີ່ເກີດຂຶ້ນໃນສັງຄົມປັດຈຸບັນ.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງ ຂອງປະເທດອື່ນ	ມາດຕາ 408 ຂອງປະມວນກົດໝາຍແພ່ງ ແລະ ພານິດໄທ; ມາດຕາ 706 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 506 ການປະຕິບັດພັນທະພາຍຫຼັງໝົດອາຍຸຄວາມ

ບຸກຄົນໃດຫາກໄດ້ປະຕິບັດພັນທະຂອງຕົນພາຍຫຼັງໝົດອາຍຸຄວາມແລ້ວຜູ້ກ່ຽວບໍ່ມີສິດທອງເອົາຊັບ ສິ່ງຂອງນັ້ນຄືນ.

ຈຸດປະສົງ	ເພື່ອໃຫ້ລູກໜີ້ທີ່ເຕັມໃຈໃຊ້ໜີ້ສິນຂອງຕົນເອງແລ້ວກໍແລ້ວໄປ ໂດຍບໍ່ໃຊ້ຂໍຍົກ ເວັ້ນທາງອາຍຸຄວາມມາສ້າງຄວາມອຸ້ນອາຍຕາມພາຍຫລັງ.
ຕົວຢ່າງ	**ກ** ເປັນໜີ້ **ຂ** ຈຳນວນ 10.000.000 ກີບ ກຳນົດເວລາ ຫົກເດືອນດອກເບ້ຍ 3 % ເດືອນ, ເມື່ອຮອດກຳນົດເວລາໃຊ້ໜີ້ **ກ** ບໍ່ມີຈຶ່ງບໍ່ໄດ້ໄປໃຊ້ໜີ້ **ຂ** ແລະ **ຂ** ກໍບໍ່ມາ ຖາມເອົາໜີ້ສິນກັບ **ກ** ຈົນຮອດ ສາມປີຜ່ານໄປ **ກ** ມີເງິນ ຈຶ່ງໄປໃຊ້ໜີ້ **ຂ** ຫຼັງຈາກ ໃຊ້ໜີ້ແລ້ວຈຶ່ງຮູ້ວ່າຕົນບໍ່ໃຊ້ກໍໄດ້ເພາະໝົດອາຍຸຄວາມ ໃນການທວງຈຶ່ງຢາກໄດ້ ເງິນຈຳນວນດັ່ງກ່າວຄືນ. **ກ** ບໍ່ມີສິດທອງເອົາເງິນຄືນ, ຍົກເວັ້ນເຈົ້າໜີ້ຍິນຍອມ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ ສ້າງຂຶ້ນໃໝ່ ເພື່ອໃຫ້ສອດຄ່ອງກັບສະພາບຕົວຈິງ ຂອງສັງຄົມປັດຈຸບັນ ແລະ ກົດໝາຍ ທັງເປັນການແກ້ໄຂບັນຫາທີ່ເກີດຂຶ້ນໃນສັງຄົມປັດຈຸບັນ.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງ ຂອງປະເທດອື່ນ	ມາດຕາ 408 ຂອງປະມວນກົດໝາຍແພ່ງ ແລະ ພານິດໄທ.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 507 ການປະຕິບັດສິ່ງໃດໜຶ່ງ ໂດຍຮູ້ວ່າບໍ່ມີພັນທະ

ບຸກຄົນໃດ ຫາກໄດ້ປະຕິບັດສິ່ງໃດໜຶ່ງ ຄືກັບການປະຕິບັດພັນທະຕໍ່ບຸກຄົນອື່ນ ໂດຍຮູ້ວ່າຕົນບໍ່ມີ ພັນທະ ຜູ້ກ່ຽວຈະຮ້ອງຂໍໃຫ້ສິ່ງສິ່ງທີ່ຕົນໄດ້ປະຕິບັດໄປແລ້ວນັ້ນຄືນບໍ່ໄດ້.

ຈຸດປະສົງ	ເພື່ອເຮັດໃຫ້ຜູ້ທີ່ຕົນຮູ້ດີວ່າ ບໍ່ມີພັນທະແຕ່ຕັ້ງໃຈປະຕິບັດພັນທະດັ່ງກ່າວ ບໍ່ໃຫ້ ໄປທວງເອົາຄືນເມື່ອປ່ຽນໃຈ.
ຕົວຢ່າງ	**ກ** ມັກຮັກ **ຈ** ຫຼາຍເມື່ອຮູ້ **ຈ** ເປັນໜີ້ **ງ** ຈຳນວນ 10.000.000 ກີບ ຈຶ່ງໄປໃຊ້ ໜີ້ສິນດັ່ງກ່າວໃຫ້ ເພື່ອຍາກໃຫ້ **ຈ** ປະທັບໃຈ, ຕໍ່ມາ **ຈ** ພັດມາບອກ **ກ** ວ່າຕົນ ມີຜົວແລ້ວຈຶ່ງຄິດເສຍດາຍເງິນ ຈຳນວນ 10.000.000 ກີບ ຈຶ່ງໄປຖາມເອົາ ເງິນຄືນນຳເຈົ້າໜີ້ຄື **ງ**. **ກ** ແມ່ນບໍ່ສາມາດໄປຖາມເອົາເງິນຈຳນວນດັ່ງກ່າວຄືນ ໄດ້ ເພາະລາວຮູ້ດີວ່າຕົນບໍ່ມີພັນທະ.

ເຫດຜົນໃນການສ້າງໃໝ່	ມາດຕານີ້ ສ້າງຂຶ້ນໃໝ່ ເພື່ອໃຫ້ສອດຄ່ອງກັບສະພາບຕົວຈິງ ຂອງສັງຄົມປັດຈຸບັນ ແລະ ກົດໝາຍ ທັງເປັນການແກ້ໄຂບັນຫາທີ່ເກີດຂຶ້ນໃນສັງຄົມປັດຈຸບັນ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 407 ຂອງປະມວນກົດໝາຍແພ່ງ ແລະ ພານິດໄທ; ມາດຕາ 705 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 508 ການປະຕິບັດພັນທະຂອງຜູ້ອື່ນ

ບຸກຄົນໃດ ຫາກໄດ້ປະຕິບັດພັນທະຂອງຜູ້ອື່ນ ໃຫ້ເຈົ້າໜີ້ທີ່ບໍ່ແມ່ນເຈົ້າໜີ້ຂອງຕົນດ້ວຍຄວາມຫຼົງຜິດ ຊຶ່ງພາໃຫ້ເຈົ້າໜີ້ ທຳລາຍເອກະສານຕ່າງໆ ທີ່ເປັນຫຼັກຖານກ່ຽວກັບ ໜີ້ສິນ ຫຼື ການປະຕິບັດພັນທະ ຫຼື ລົບລ້າງການຄ້ຳປະກັນ ດ້ວຍຄວາມບໍລິສຸດໃຈ ຫຼື ໝົດອາຍຸຄວາມ, ເຈົ້າໜີ້ນັ້ນບໍ່ຕ້ອງສົ່ງຄືນ ແລະ ບຸກຄົນນັ້ນກໍບໍ່ມີສິດທວງເອົາການປະຕິບັດພັນທະທີ່ຕົນໄດ້ປະຕິບັດໄປແລ້ວນັ້ນຄືນ.

ຜູ້ທີ່ໄດ້ປະຕິບັດພັນທະຂອງຜູ້ອື່ນນັ້ນ ມີສິດທວງໃຫ້ຜູ້ມີພັນທະເດີມ ຫຼື ຜູ້ຄ້ຳປະກັນໃຊ້ແທນຄືນພັນທະທີ່ຕົນໄດ້ປະຕິບັດໄປແລ້ວນັ້ນ.

ຈຸດປະສົງ	ເພື່ອປົກປ້ອງເຈົ້າໜີ້ທີ່ບໍລິສຸດໃຈ ຈາກການໃຊ້ແທນໜີ້ສິນດ້ວຍຄວາມຫຼົງຜິດ ຂອງບຸກຄົນໃດໜຶ່ງຊຶ່ງຜູ້ກ່ຽວມີສິດທວງເອົາຈາກເຈົ້າໜີ້ຕົວຈິງ.
ຕົວຢ່າງ	**ກ** ໄດ້ພາ **ສ** ໄປຢືມເງິນ ນຳ **ຊ** ຈຳນວນ 20.000.000 ກີບ, ຜ່ານມາ **ສ** ໄດ້ຊຳລະ ມາແລ້ວຈຳນວນ 15.000.000 ກີບ ແລະ ຍັງເຫຼືອເງິນອີກ ຈຳນວນ 5.000.000 ກີບ ເມື່ອຮອດກຳນົດເວລາໃຊ້ໜີ້ **ສ** ໄປເຮັດວຽກຢູ່ຕ່າງປະເທດ 3 ເດືອນ, ເມື່ອ **ກ** ຮູ້ວ່າ **ສ** ໄປເຮັດວຽກຢູ່ຕ່າງປະເທດ, **ກ** ຈຶ່ງຄິດວ່າຕົນເອງເປັນຜູ້ຄ້ຳປະກັນ ໜີ້ສິນໃຫ້ **ສ** ຈຶ່ງໄດ້ໄປໃຊ້ໜີ້ແທນ **ສ** ແລະ **ຊ** ກໍຄິດວ່າ **ກ** ຖືກແຕ່ງຕັ້ງໃຫ້ເປັນ ຜູ້ຕ່າງໜ້າມາໃຊ້ໜີ້ແທນຈຶ່ງຮັບເອົາດ້ວຍຄວາມບໍລິສຸດໃຈ **ຊ** ເຫັນວ່າ **ສ** ໃຊ້ໜີ້ ໝົດແລ້ວຈຶ່ງໄດ້ທຳລາຍສັນຍາໜີ້ສິນດັ່ງກ່າວ, ແຕ່ຄວາມຈິງ **ກ** ເຂົ້າຮ່ວມເປັນ ພະຍານໃນການກູ້ຢືມເງິນຂອງ **ສ** ເທົ່ານັ້ນ **ກ** ບໍ່ສາມາດທວງເອົາເງິນຈາກ **ຊ** ໄດ້. **ກ** ສາມາດທວງເອົາເງິນທີ່ໃຊ້ໜີ້ແທນນຳ **ສ** ໄດ້.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງຂຶ້ນໃໝ່ເພື່ອໃຫ້ສອດຄ່ອງກັບສະພາບຕົວຈິງຂອງສັງຄົມປັດຈຸບັນ ແລະ ກົດໝາຍ ທັງເປັນການແກ້ໄຂບັນຫາທີ່ເກີດຂຶ້ນໃນສັງຄົມປັດຈຸບັນ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 409 ຂອງປະມວນກົດໝາຍແພ່ງ ແລະ ພານິດໄທ; ມາດຕາ 707 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 509 ການປະຕິບັດພັນທະທີ່ຜິດກົດໝາຍ

ບຸກຄົນໃດ ຫາກໄດ້ປະຕິບັດພັນທະຂອງຕົນທີ່ເປັນການຂັດກັບຜົນປະ�โยດຂອງ ລັດ, ສັງຄົມ, ຮີດຄອງປະເພນີ ຫຼື ລະບຽບການ, ກົດໝາຍ ຕໍ່ບຸກຄົນອື່ນແລ້ວ ຜູ້ກ່ຽວບໍ່ມີສິດທວງເອົາຄືນ ແລະ ຍັງມີຄວາມ ຮັບຜິດຊອບຕໍ່ໜ້າກົດໝາຍ.

ຈຸດປະສົງ	ກົດໝາຍບໍ່ຮັບຮູ້ຕໍ່ພັນທະທີ່ເກີດຂຶ້ນໂດຍຂັດກັບກົດໝາຍອາຍາ ຫຼື ຮີດຄອງປະເພນີ
ຕົວຢ່າງ	**ກ** ເຮັດສັນຍາຊື້ຂາຍລົດຖີບກັບ **ສ** ໃນລາຄາ ຈຳນວນ2.000.000 ກີບ ແລະ ໄດ້ຈ່າຍເງິນມັດຈຳໃຫ້ **ສ** ເຄິ່ງໜຶ່ງຈຳນວນ 1.000.000 ກີບ, ຊຶ່ງ **ກ** ຮູ້ວ່າ ລົດຖີບດັ່ງກ່າວແມ່ນລັກມາ, ເມື່ອຕຳຫຼວດຈັບ **ສ** ແລະ ໄດ້ຍຶດເອົາລົດຖີບໄວ້ **ກ** ຈຶ່ງຕ້ອງການເງິນຄ່າມັດຈຳລົດຖີບຄືນນຳ **ສ** **ກ** ບໍ່ມີສິດໃນການທວງເງິນຄືນເພາະເປັນການກະທຳຜິດກົດໝາຍ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ ສ້າງຂຶ້ນໃໝ່ ເພື່ອໃຫ້ສອດຄ່ອງກັບສະພາບຕົວຈິງ ຂອງສັງຄົມປັດຈຸບັນ ແລະ ກົດໝາຍ ທັງເປັນການແກ້ໄຂບັນຫາທີ່ເກີດຂຶ້ນໃນສັງຄົມປັດຈຸບັນ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 741 ຂອງປະມວນກົດໝາຍແພ່ງ ກຳປູເຈຍ; ມາດຕາ 411 ຂອງປະມວນກົດໝາຍແພ່ງ ແລະ ພານິດໄທ; ມາດຕາ 708 ຂອງປະມວນກົດໝາຍແພ່ງ ຍີ່ປຸ່ນ.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ບົດອະທິບາຍປະມວນກົດໝາຍແພ່ງ

ພາກທີ VII ການຄ້ຳປະກັນ
(ມາດຕາ 510-564)

ພາກທີ VII
ການຄ້ຳປະກັນ

ໝວດທີ 1
ຫຼັກການທົ່ວໄປ

ມາດຕາ 510 ການຄ້ຳປະກັນ

ການຄ້ຳປະກັນ ແມ່ນການຮັບປະກັນການປະຕິບັດພັນທະ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ຫຼື ສັນຍາ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນຄວາມໝາຍຂອງການຄ້ຳປະກັນຊຶ່ງເປັນວິທີການ ເພື່ອຮັບປະກັນການປະຕິບັດພັນທະໜີ້ສິນ ໃນກໍລະນີທີ່ລູກໜີ້ບໍ່ສາມາດປະຕິບັດພັນທະໜີ້ສິນ.
ຕົວຢ່າງ	**ກ** ໄດ້ກູ້ຢືມເງິນຈາກ **ຂ** ຈຳນວນ 1.000.000 ກີບ ຊຶ່ງໄດ້ເອົາສິດນຳໃຊ້ທີ່ດິນ ແລະ ເຮືອນ ທີ່ເປັນກຳມະສິດຂອງຜູ້ກ່ຽວມາຈຳນອງ ເພື່ອຮັບປະກັນການໃຊ້ແທນໜີ້ສິນ ນອກຈາກນີ້ກ່ຽວກັບການຄ້ຳປະກັນແມ່ນໃຫ້ເບິ່ງມາດຕາ 518 ການຄ້ຳປະກັນຕາມກົດໝາຍ ແລະ ມາດຕາ 520 ການຄ້ຳປະກັນຕາມສັນຍາ.
ເຫດຜົນໃນການຮັກສາເດີມ	ມາດຕານີ້ ຮັກສາເນື້ອໃນເດີມມາດຕາ 2 ຂອງກົດໝາຍວ່າດ້ວຍການຄ້ຳປະກັນ ການປະຕິບັດສັນຍາ ປີ 2005.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 511, 518 ແລະ 520 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 511 ປະເພດການຄ້ຳປະກັນ

ການຄ້ຳປະກັນ ມີສອງປະເພດ ຄື:

1. ການຄ້ຳປະກັນຕາມກົດໝາຍ;
2. ການຄ້ຳປະກັນຕາມສັນຍາ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນການຄ້ຳປະກັນແມ່ນມີສອງປະເພດ ຄື: ການ ຄ້ຳປະກັນຕາມກົດໝາຍ ແລະ ການຄ້ຳປະກັນຕາມສັນຍາ.
ຕົວຢ່າງ	ອ້າງອີງ ຕາມມາດຕາ 518 ການຄ້ຳປະກັນຕາມກົດໝາຍ ແລະ ມາດຕາ 520 ການຄ້ຳປະກັນຕາມສັນຍາ.
ເຫດຜົນໃນການຮັກສາເດີມ	ມາດຕານີ້ຮັກສາເນື້ອໃນເດີມ ມາດຕາ 3 ຂອງກົດໝາຍວ່າດ້ວຍການຄ້ຳປະກັນ ການປະຕິບັດສັນຍາ 2005.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.

ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄ້ວາ.

ມາດຕາ 512 ລຳດັບບຸລິມະສິດຂອງການຄ້ຳປະກັນ

ການປະຕິບັດພັນທະດ້ວຍການຄ້ຳປະກັນ ໃຫ້ປະຕິບັດຕາມລຳດັບບຸລິມະສິດ ດັ່ງນີ້:

1. ບຸລິມະສິດການຄ້ຳປະກັນຕາມກົດໝາຍ;
2. ບຸລິມະສິດການຄ້ຳປະກັນຕາມສັນຍາ.

ບຸລິມະສິດທີ່ກ່າວມາເທິງນີ້ ຈະຖືກນຳໃຊ້ກໍຕໍ່ເມື່ອລູກໜີ້ ຫາກບໍ່ປະຕິບັດພັນທະຂອງຕົນ ຫຼື ຖືກສານຕັດສິນໃຫ້ລົ້ມລະລາຍ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນສາຍພົວພັນທາງດ້ານບຸລິມະສິດຂອງການຄ້ຳປະກັນຕາມກົດໝາຍ ແລະ ການຄ້ຳປະກັນຕາມສັນຍາ.
ຕົວຢ່າງ	ກ່ຽວກັບຕົວຢ່າງຂອງການຄ້ຳປະກັນຕາມກົດໝາຍ ແມ່ນອ້າງອີງໃສ່: ມາດຕາ 513-517 ການຄ້ຳປະກັນຕາມກົດໝາຍ ທີ່ສ້າງຂຶ້ນສະເພາະແຕ່ລະສັບສິນ. ມາດຕາ 518 ແລະ 519 ກ່ຽວກັບການຄ້ຳປະກັນຕາມກົດໝາຍທີ່ສ້າງຂຶ້ນສຳລັບຊັບສິນທັງໝົດ.
ເຫດຜົນໃນການຮັກສາເດີມ	ມາດຕານີ້ຮັກສາເນື້ອໃນເດີມ ມາດຕາ 7 ຂອງກົດໝາຍວ່າດ້ວຍການຄ້ຳປະກັນ ການປະຕິບັດສັນຍາ ປີ 2005.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 334, 336 ແລະ 339 ຂອງປະມວນກົດໝາຍແພງຢີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 519 ແລະ 524 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄ້ວາ.

ມາດຕາ 513 ການສືບຕໍ່ສິດຂອງເຈົ້າໜີ້ ຕໍ່ຊັບຄ້ຳປະກັນ

ເຈົ້າໜີ້ ທີ່ມີການຄ້ຳປະກັນ ຍັງສືບຕໍ່ມີສິດຕໍ່ຊັບຄ້ຳປະກັນ ລວມທັງເງິນ ຫຼື ຊັບອື່ນ ທີ່ໄດ້ມາຈາກການຊື້ຂາດຊັບຄ້ຳປະກັນ ຈົນກວ່າຈະໄດ້ຮັບການປະຕິບັດສິດ ແລະ ພັນທະຄົບຖ້ວນ ຕາມສັນຍາຄ້ຳປະກັນນັ້ນ ເຖິງວ່າໄດ້ມີການປ່ຽນຮູບການຄ້ຳປະກັນ ຫຼື ລູກໜີ້ ໄດ້ຊື້ຂາດຊັບຄ້ຳປະກັນນັ້ນແລ້ວກໍຕາມ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນກ່ຽວກັບກໍລະນີ ຊັບຄ້ຳປະກັນໄດ້ປ່ຽນສະພາບຍ້ອນການຂາຍ,ໃຫ້ເຊົ່າ, ການສູນຫາຍ, ເປ່ເພ ຫຼື ໄດ້ຖືກຊື້ຂາດໄປແລ້ວກໍຕາມແຕ່ຜົນຂອງສິດຕໍ່ການຄ້ຳປະກັນນັ້ນແມ່ນຍັງກວມໄປເຖິງເງິນທີ່ຜູ້ເຮັດການຄ້ຳປະກັນໄດ້ຮັບຈາກການຂາຍ, ຈາກຄ່າເຊົ່າ, ການສູນຫາຍ, ເປ່ເພ ຫຼື ຈາກການຊື້ຂາດຊັບຄ້ຳປະກັນດັ່ງກ່າວ ແລະ ຍັງລວມໄປເຖິງຊັບອື່ນທີ່ປ່ຽນຮູບທາງດ້ານຄຸນຄ່າອີກດ້ວຍ.
ຕົວຢ່າງ	**ກ** ໄດ້ເຮັດສັນຍາກູ້ຢືມເງິນ ຈຳນວນ 50.000.000 ກີບ ກັບ **ຂ** ໂດຍເອົາເອກະສານລົດ ໝາຍເລກທະບຽນ ກກ 0000 ມາເປັນຫຼັກຊັບໃນການຄ້ຳປະກັນໃນການກູ້ຢືມເງິນນັ້ນ ແຕ່ລົດແມ່ນຍັງຢູ່ນຳ **ກ** ເພື່ອນຳໃຊ້ປົກກະຕິ ຕໍ່ມາ **ກ** ໄດ້ເອົາລົດຄັນດັ່ງກ່າວໄປຂາຍໄດ້ເງິນ ຈຳນວນ 100.000.000 ກີບ ແລະ ໄດ້ເອົາເງິນຈຳນວນດັ່ງກ່າວໄປຝາກທະນາຄານ **ຄ** ເມື່ອເຖິງກຳນົດເວລາການສິ້ນສຸດສັນຍາ **ກ** ຫາກບໍ່ສາມາດປະຕິບັດພັນທະໄດ້ຕາມສັນຍາແລ້ວ ໃນກໍລະນີດັ່ງກ່າວ **ຂ** ສາມາດມີສິດຕໍ່ຊັບ ຫຼື ບັນຊີເງິນຝາກນຳທະນາຄານ **ຄ** ທີ່ໄດ້ຈາກການຂາຍລົດຄັນດັ່ງກ່າວ ທີ່ລູກໜີ້ໄດ້ນຳມາຄ້ຳປະກັນນັ້ນ. ທະນາຄານ **ຄ** ຕ້ອງໄດ້ອາຍັດສິດໃນບັນຊີເງິນຝາກດັ່ງກ່າວໃນນາມເປັນຊັບຄ້ຳປະກັນ, ເພື່ອຈັດຕັ້ງປະຕິບັດສິດຕໍ່ການຄ້ຳປະກັນເຮັດໃຫ້ສາມາດເກັບກູ້ໜີ້ສິນຈາກບ້ອງດັ່ງກ່າວໄດ້.

ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 11 ໃນດຳລັດການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍການຄ້ຳປະກັນການປະຕິບັດສັນຍາ ໄດ້ກຳນົດເຖິງສິດຕໍ່ຊັບຂອງເຈົ້າໜີ້ ຕໍ່ຊັບທີ່ນຳມາຄ້ຳປະກັນເຖິງວ່າຊັບນັ້ນ ຈະມີການປ່ຽນແປງຄຸນລັກສະນະທີ່ເກີດ ຈາກການຂາຍການໂອນຫຼືການມອບກຳຕາມທັງນີ້ກໍເພື່ອເປັນການປົກປ້ອງເຈົ້າໜີ້ ແລະ ເປັນການຮັບປະກັນໃຫ້ຄູ່ສັນຍາ ຕໍ່ກັບຊັບທີ່ນຳມາຄ້ຳປະກັນນັ້ນສາມາດ ນຳມາປະຕິບັດ ສິດ ແລະ ພັນທະ ໄດ້ຕາມທີ່ກຳນົດໄວ້ໃນສັນຍາຂອງການຄ້ຳ ປະກັນນັ້ນ.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງ ຂອງປະເທດອື່ນ	ມາດຕາ 304, 350 ແລະ 372 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 519 ແລະ 524 ຂອງປະມວນກົດໝາຍແພ່ງ.
ປະເພນີສານ ແລະ ອື່ນໆ	ສືບຕໍ່ຄົ້ນຄ້ວາ.

ມາດຕາ 514 ການຊື້ ຫຼື ການເຊົ່າຊັບຄ້ຳປະກັນດ້ວຍຄວາມບໍລິສຸດໃຈ

ຜູ້ຊື້ ຫຼື ຜູ້ເຊົ່າ ຊັບຄ້ຳປະກັນ ດ້ວຍຄວາມບໍລິສຸດໃຈ ຕາມລາຄາໃນທ້ອງຕະຫຼາດ, ນຳໃຊ້ຢ່າງເປີດເຜີຍ ແລະ ສະຫງົບ ໂດຍບໍ່ຮູ້ວ່າຊັບດັ່ງກ່າວ ໄດ້ຖືກນຳໃຊ້ເຂົ້າໃນການຄ້ຳປະກັນໜີ້ສິນ ຫຼື ພັນທະໃດໜຶ່ງມາກ່ອນ ຫຼື ບໍ່ຮູ້ວ່າໄດ້ມີການຈົດທະບຽນການຄ້ຳປະກັນ ຈະບໍ່ມີຄວາມຮັບຜິດຊອບ ຕໍ່ໜີ້ສິນ ຫຼື ພັນທະນັ້ນ.

ຈຸດປະສົງ	ເພື່ອປົກປ້ອງຜົນປະ�โยດຂອງບຸກຄົນທີ່ສາມ ຈາກການຊື້ຊັບ ແລະ ການນຳໃຊ້ ຊັບສິ່ງຂອງທີ່ຖືກຕ້ອງ ແລະ ບໍ່ຮູ້ໄດ້ວ່າຊັບທີ່ຊື້ມານັ້ນ ໄດ້ຖືກນຳໃຊ້ເຂົ້າໃນການ ຄ້ຳປະກັນມາກ່ອນ.
ຕົວຢ່າງ	**ກ** ໄດ້ ກູ້ຢືມເງິນ ຈຳນວນ 50.000.000 ກີບ ກັບ **ຂ** ໂດຍເອົາສາຍຄໍຄຳສີບບາດ ເປັນຫຼັກຊັບເພື່ອຈຳນຳໃນການຄ້ຳປະກັນ, ມາມື້ໜຶ່ງ **ກ** ຢາກໃສ່ສາຍຄໍຄຳດັ່ງກ່າວ ໄປງານລ້ຽງຈຶ່ງໄດ້ໄປຂໍຢືມຈາກ **ຂ** ມາໃສ່ສະເພາະມື້ງານລ້ຽງ, **ຂ** ຈຶ່ງເອົາສາຍຄໍຄຳ ດັ່ງກ່າວໃຫ້ **ກ** ໃຊ້ຊົ່ວຄາວ, ຈາກນັ້ນ ເຖິງວ່າງານລ້ຽງແລ້ວກໍຕາມ **ກ** ກໍ ຍັງບໍ່ເອົາສາຍຄໍຄຳມາສົ່ງ **ຂ** ແລ້ວຍັງໄດ້ຂາຍສາຍຄໍດັ່ງກ່າວໃຫ້ **ຄ** ໃນຈຳນວນ 70.000.000 ກີບ ຕາມລາຄາທີ່ຂາຍຄຳໃນທ້ອງຕະຫຼາດໃນເວລານັ້ນ ແລະ **ຄ** ເອງກໍບໍ່ຮູ້ມາກ່ອນວ່າສາຍຄໍຄຳທີ່ຜູ້ກ່ຽວຊື້ມານັ້ນແມ່ນຍັງຢູ່ໃນ ສັນຍາຂອງ ການຄ້ຳປະກັນໃນນາມເປັນຊັບເປົ້າໝາຍຂອງສິດຕໍ່ການຈຳນຳ ຂອງ **ຂ** ກໍລະນີ ນີ້ເຖິງແມ່ນວ່າ **ກ** ບໍ່ສາມາດໃຊ້ແທນໜີ້ສິນ ຈຳນວນ 50.000.000 ກີບ ຕໍ່ **ຂ** ກໍຕາມ. **ຄ** ກໍບໍ່ມີຄວາມຮັບຜິດຊອບຕໍ່ໜີ້ສິນຂອງ **ກ**.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 17/1 ດຳລັດການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍການຄ້ຳປະກັນການປະຕິບັດສັນຍາ ແມ່ນໄດ້ກຳນົດກ່ຽວກັບການປົກ ປ້ອງບຸກຄົນທີ່ສາມ ທີ່ໄດ້ຊື້ຊັບມາດ້ວຍຄວາມບໍລິສຸດໃຈ ໂດຍທີ່ບໍ່ສາມາດຮູ້ ໄດ້ວ່າຊັບນັ້ນ ຕົກຢູ່ໃນເງື່ອນໄຂຂອງສັນຍາຄ້ຳປະກັນ ຫຼື ຊັບນັ້ນ ໄດ້ຈົດທະ ບຽນການຄ້ຳປະກັນມາກ່ອນ. ການປົກປ້ອງບຸກຄົນທີ່ສາມທີ່ຊື້ຊັບດ້ວຍຄວາມ ບໍລິສຸດໃຈແມ່ນເປັນຫຼັກການໜຶ່ງທີ່ກຳນົດຂຶ້ນມາເພື່ອສ້າງຄວາມເປັນທຳ ແລະ ປົກປ້ອງຜົນປະ�โยດທີ່ຖືກຕ້ອງຂອງບຸກຄົນໃດໜຶ່ງ ແລະ ການກຳນົດເຂົ້າໃນ ປະມວນກົດໝາຍແພ່ງໃຫ້ການຕັດສິນ ແລະ ການພິຈະລະນາຄະດີ ລວມໄປເຖິງ ການແກ້ໄຂບັນຫາທີ່ເກີດຂຶ້ນນັ້ນໂດຍສັນຕິວິທີ.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງ ຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 243 ແລະ 409 ຂອງປະມວນກົດໝາຍແພ່ງ.

ປະເພນີສານ ແລະ ອື່ນໆ	ມາດຕາ 243 ແລະ 409 ຂອງປະມວນກົດໝາຍແພ່ງແມ່ນມາດຕາທີ່ກຳນົດກໍລະນີເຊັ່ນ: ຜູ້ທີ່ບໍ່ແມ່ນເຈົ້າກຳມະສິດໄດ້ຂາຍຊັບທີ່ເປັນກຳມະສິດຂອງຜູ້ອື່ນໃຫ້ແກ່ບຸກຄົນທີສາມທີ່ມີຄວາມບໍລິສຸດໃຈໂດຍບອກວ່າແມ່ນຊັບຂອງຕົນເມື່ອບຸກຄົນທີສາມທີ່ມີຄວາມບໍລິສຸດໃຈຖືກເຈົ້າກຳມະສິດທວງໃຫ້ສົ່ງຄືນຊັບດັ່ງກ່າວລາວສາມາດທວງເອົາການທົດແທນມູນຄ່າຂອງຊັບດັ່ງກ່າວສ່ວນໃນມາດຕານີ້ແມ່ນເປັນການປົກປ້ອງບຸກຄົນທີສາມທີ່ມີຄວາມບໍລິສຸດໃຈໃນອີກສະຖານະການ (ບໍ່ໄດ້ຮັບຮູ້ການໄດ້ກຳມະສິດໃນທັນທີ).

ມາດຕາ 515 ບຸລິມະສິດ ຕໍ່ຊັບທີ່ຊື້ມາດ້ວຍເງິນກູ້ຍືມ

ເຈົ້າໜີ້ທີ່ໃຫ້ເງິນກູ້ຍືມ ເພື່ອຊື້ຊັບ ມີບຸລິມະສິດກ່ອນເຈົ້າໜີ້ຜູ້ອື່ນໃນຊັບນັ້ນ ພາຍໃນເວລາສິບວັນນັບແຕ່ວັນທີ່ລູກໜີ້ໄດ້ຄອບຄອງຊັບທີ່ຊື້ມາດ້ວຍເງິນກູ້ຍືມນັ້ນ ເປັນຕົ້ນໄປ. ຖ້າກາຍກຳນົດເວລານີ້ແລ້ວຫາກບໍ່ໄດ້ຈົດທະບຽນຄ້ຳປະກັນ ບຸລິມະສິດດັ່ງກ່າວ ກໍຈະຕົກໄປ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນວ່າເຈົ້າໜີ້ຜູ້ໃຫ້ກູ້ຍືມໄດ້ຮັບການຄ້ຳປະກັນທັງເປັນຜູ້ໄດ້ຮັບບຸລິມະສິດຕາມກົດໝາຍໃນຊັບຂອງລູກໜີ້ ໄດ້ຊື້ດ້ວຍເງິນໃຫ້ກູ້ຍືມ ໃນຊັບທີ່ຊື້ດ້ວຍເງິນທີ່ຕົນໃຫ້ກູ້ຍືມນັ້ນ.
ຕົວຢ່າງ	ໃນວັນທີ 10 ມັງກອນ 2021, **ກ** ໄດ້ໃຫ້ **ຂ** ກູ້ຍືມເງິນ ຈຳນວນ 70.000.000 ກີບ ເພື່ອຊື້ຈັກຂົ້ວຊາ, **ຂ** ໄດ້ຊື້ຈັກຂົ້ວຊາໃນວັນທີ 15 ມັງກອນ 2021, ຊຶ່ງເປັນວັນທີ່ **ຂ** ໄດ້ຄອບຄອງຈັກຂົ້ວຊາທີ່ໄດ້ຊື້ມາດ້ວຍເງິນກູ້ຍືມ, **ກ** ມີບຸລິມະສິດ ພາຍໃນກຳນົດສິບວັນນັບແຕ່ວັນທີ 15 ຫາ 25 ມັງກອນ 2021,ຖ້າກາຍວັນທີ 25 ມັງກອນ 2021 ນີ້ **ກ** ຫາກບໍ່ໄດ້ຈົດທະບຽນການຄ້ຳປະກັນ ບຸລິມະສິດດັ່ງກ່າວ ຈະຕົກໄປ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກມາດຕາ 18 ຂອງດຳລັດວ່າດ້ວຍການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຄ້ຳປະກັນການປະຕິບັດສັນຍາ ປີ 2011 ໂດຍໄດ້ປັບກຳນົດເວລາໃນການໃຫ້ບູລິມະສິດ ຈາກ 14 ວັນ ເປັນ 10 ວັນ ແລະ ຈັດລຽງຄຳສັບຄືນ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 516 ແລະ 517 ຂອງປະມວນກົດໝາຍແພ່ງ.
ປະເພນີສານ ແລະ ອື່ນໆ	ໃນມາດຕາ 515-517 ແມ່ນລະບົບທີ່ໃຫ້ບຸລິມະສິດແກ່ເຈົ້າໜີ້ຕໍ່ຊັບໃດໜຶ່ງທີ່ເປັນກຳມະສິດຂອງລູກໜີ້ກໍລະນີທີ່ມີສາຍພົວພັນສະເພາະກັບຊັບນັ້ນ.

ມາດຕາ 516 ບຸລິມະສິດຂອງການຄ້ຳປະກັນດ້ວຍສັດລ້ຽງ

ເຈົ້າໜີ້ທີ່ຮັບການຄ້ຳປະກັນດ້ວຍສັດລ້ຽງ ມີບຸລິມະສິດໄດ້ຮັບການໃຊ້ແທນໜີ້ສິນກ່ອນເຈົ້າໜີ້ຜູ້ອື່ນ ເຊັ່ນ ຜູ້ໃຫ້ກູ້ຍືມເງິນ ເພື່ອຊື້ອາຫານສັດ ຫຼື ຢາປົວພະຍາດ, ຍົກເວັ້ນເຈົ້າໜີ້ທີ່ໄດ້ຈົດທະບຽນຄ້ຳປະກັນ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນວ່າເຈົ້າໜີ້ທີ່ໄດ້ໃຫ້ກູ້ຍືມເພື່ອຊື້ອາຫານສັດ ຫຼື ຢາປົວພະຍາດ ສັດລ້ຽງຈະໄດ້ຮັບບຸລິມະສິດຂອງການຄ້ຳປະກັນ ຕາມກົດໝາຍໃນສັດລ້ຽງດັ່ງກ່າວ.

ຕົວຢ່າງ	**ກ** ໃຫ້ **ຂ** ກູ້ຢືມເງິນ ຈຳນວນ 20.000.000 ກີບ ໂດຍ **ຂ** ເອົາງົວ 5 ໂຕເປັນຫຼັກຊັບຄ້ຳປະກັນ. ຕໍ່ມາ **ຂ** ໄດ້ກູ້ຢືມເງິນນຳ **ຄ** ຈຳນວນ 10.000.000 ກີບ ເພື່ອຊື້ຢາປ້ອງກັນພະຍາດສັດ, **ກ** ມີບຸລິມະສິດ ໄດ້ຮັບການໃຊ້ແທນໜີ້ສິນກ່ອນ **ຄ,** ແຕ່ໃນກໍລະນີ **ຄ** ຫາກໄດ້ຈົດທະບຽນການຄ້ຳປະກັນດ້ວຍຫຼັກຊັບໃດໜຶ່ງ **ຄ** ກໍຈະມີບຸລິມະສິດໄດ້ຮັບການໃຊ້ແທນໜີ້ສິນກ່ອນ **ກ**.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກມາດຕາ 18 ແລະ 19 ດຳລັດຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍ ການຄ້ຳປະກັນການປະຕິບັດສັນຍາ ແມ່ນໄດ້ກຳນົດເຖິງບຸລິມະສິດທາງດ້ານກົດໝາຍ ໃຫ້ເຈົ້າໜີ້ໃນການໃຫ້ ຫຼື ປ່ອຍເງິນກູ້ຢືມເພື່ອໄປຊື້ສັດລ້ຽງ ແລະ ເອົາສັດລ້ຽງນັ້ນ ມາເປັນຫຼັກຊັບໃນການຈຳນຳ ຊຶ່ງໃນ ກົດໝາຍ ວ່າດ້ວຍການຄ້ຳປະກັນການປະຕິບັດສັນຍາ ສະບັບ 2005 ນັ້ນ ແມ່ນບໍ່ໄດ້ກຳນົດລະອຽດເທື່ອ ສ່ວນຫຼາຍຈະເປັນລັກສະນະລວມໆ ຫຼາຍກ່ວາສະນັ້ນ ເພື່ອເຮັດໃຫ້ມີຄວາມ ຮັດກຸມ ແລະ ສາມາດແກ້ໄຂ ແລະ ຈັດຕັ້ງປະຕິບັດໄດ້ຢ່າງງ່າຍດາຍ ແລະ ເປັນ ບ່ອນອີງໃນການແກ້ໄຂ ການພິຈະລະນາຄະດີ.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງ ຂອງປະເທດອື່ນ	ສືບຕໍ່ຄົ້ນຄ້ວາ.
ມາດຕາອ້າງອີງ	ມາດຕາ 515 ແລະ 517 ຂອງປະມວນກົດໝາຍແພ່ງ.
ປະເພນີສານ ແລະ ອື່ນໆ	ໃນມາດຕາ515 ແລະ 517ແມ່ນລະບົບທີ່ໃຫ້ບຸລິມະສິດແກ່ເຈົ້າໜີ້ຕໍ່ຊັບໃດໜຶ່ງ ທີ່ເປັນກຳມະສິດຂອງລູກໜີ້ກໍລະນີທີ່ມີສາຍພົວພັນສະເພາະກັບຊັບນັ້ນ.

ມາດຕາ 517 ບຸລິມະສິດ ຂອງການຄ້ຳປະກັນດ້ວຍເຄື່ອງປູກຂອງຝັງ

ເຈົ້າໜີ້ທີ່ໄດ້ຮັບການຄ້ຳປະກັນດ້ວຍເຄື່ອງປູກຂອງຝັງ ມີບຸລິມະສິດໄດ້ຮັບການໃຊ້ແທນໜີ້ສິນ ຫຼື ປະຕິບັດພັນທະກ່ອນເຈົ້າໜີ້ຜູ້ອື່ນ ທີ່ຮັບຄ້ຳປະກັນດ້ວຍທີ່ດິນທີ່ໄດ້ປູກເຄື່ອງປູກຂອງຝັງນັ້ນ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນວ່າ ຜູ້ຮັບການຄ້ຳປະກັນດ້ວຍເຄື່ອງປູກຂອງຝັງ ມີບຸລິມະສິດ ເໜືອກວ່າຜູ້ຄ້ຳປະກັນດ້ວຍທີ່ດິນທີ່ມີເຄື່ອງປູກຂອງຝັງ ເຈົ້າໜີ້ຜູ້ທີ່ມີເຄື່ອງປູກ ຂອງຝັງຈະໄດ້ຮັບບຸລິມະສິດກ່ອນເຈົ້າໜີ້ຜູ້ອື່ນ.
ຕົວຢ່າງ	ໃນວັນທີ 2 ມີນາ 2021 **ກ** ໄດ້ກູ້ຢືມເງິນ ຈຳນວນ 20.000.000 ກີບ ນຳ **ຂ** ເພື່ອມາປູກເຂົ້າ ໂດຍເອົາເຂົ້າ (ເຂົ້າ) ເປັນຫຼັກຊັບຄ້ຳປະກັນ (ຈຳນຳ). ຕໍ່ມາ ໃນວັນທີ 2 ມິຖຸນາ 2021, **ກ** ໄດ້ກູ້ຢືມເງິນຈຳນວນ 50.000.000 ກີບ ນຳ **ຄ** ເພື່ອມາບ່ອລະບັດຜົນລະປູກທີ່ກຳລັງຈະເລີນງອກງາມນັ້ນ, ໂດຍເອົາທີ່ດິນ ຕອນດຽວກັນກັບຕອນດິນທີ່ປູກເຂົ້າມາຄ້ຳປະກັນ(ຈຳນອງ)ພ້ອມທັງຈົດທະ ບຽນຈຳນອງ. ຕໍ່ມາ **ກ** ບໍ່ສາມາດໃຊ້ແທນໜີ້ສິນໃຫ້ **ຂ** ແລະ **ຄ** ໄດ້, **ຂ** ຈະມີບູລິມະສິດໃນການ ໄດ້ຮັບການໃຊ້ແທນໜີ້ສິນກ່ອນ **ຄ**.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 20 ຂອງດຳລັດວ່າດ້ວຍການຄ້ຳປະກັນການປະ ຕິບັດສັນຍາ ໄດ້ກຳນົດໃຫ້ບຸລິມະສິດຕາມກົດໝາຍແກ່ເຈົ້າໜີ້ ທີ່ໄດ້ຮັບການຄ້ຳ ປະກັນດ້ວຍເຄື່ອງປູກຂອງຝັງ ດັ່ງນັ້ນເພື່ອໃຫ້ເນື້ອໃນໄດ້ຜັນຂະຫຍາຍ ແລະ ຈະແຈ້ງຂຶ້ນ ສາມາດຈັດຕັ້ງປະຕິບັດໄດ້ງ່າຍ ຈຶ່ງກຳນົດເພີ່ມເຕີມໃນປະມວນ ກົດໝາຍແພ່ງ ເພື່ອສາມາດຕອບສະໜອງໄດ້ໃນເງື່ອນໄຂສະພາບເສດຖະກິດ ຂອງ ສປປ ລາວ ໃນປັດຈຸບັນ.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງ ຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 515 ແລະ 516 ຂອງປະມວນກົດໝາຍແພ່ງ.

ປະເພນີສານ ແລະ ອື່ນໆ	ໃນມາດຕາ 515 ແລະ 517 ແມ່ນລະບົບທີ່ໃຫ້ບຸລິມະສິດແກ່ເຈົ້າໜີ້ຕໍ່ຊັບໃດໜຶ່ງທີ່ເປັນກຳມະສິດຂອງລູກໜີ້ກໍລະນີທີ່ມີສາຍພົວພັນສະເພາະກັບຊັບນັ້ນ.

ໝວດທີ 2
ການຄ້ຳປະກັນຕາມກົດໝາຍ

ມາດຕາ 518 ການຄ້ຳປະກັນຕາມກົດໝາຍ

ການຄ້ຳປະກັນຕາມກົດໝາຍ ແມ່ນ ການຮັບປະກັນການໃຊ້ແທນໜີ້ສິນ ຫຼື ປະຕິບັດພັນທະອື່ນ ທີ່ໄດ້ກຳນົດໄວ້ໃນກົດໝາຍ ໂດຍອີງໃສ່ເຫດຜົນທາງດ້ານມະນຸດສະທຳ ແລະ ທາງດ້ານຜົນປະ�โຫຍດລວມຂອງຊາດ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນວ່າການຄ້ຳປະກັນຕາມກົດໝາຍແມ່ນແນ່ໃສ່ເຫດຜົນທາງດ້ານມະນຸດຊະທຳ ແລະ ຜົນປະ�โຫຍດລວມຂອງຊາດພ້ອມທັງໃຫ້ເຫັນເຖິງເນື້ອໃນຈິດໃຈຂອງລະບົບດັ່ງກ່າວ.
ຕົວຢ່າງ	ບໍລິສັດ **ກ** ເຮັດທຸລະກິດການນຳເຂົ້າສິນຄ້າ ໄດ້ເກີດພາວະບໍຄ່ອງຕົວທາງດ້ານການດຳເນີນທຸລະກິດ ຊັບສິນທີ່ມີ ຕົກເປັນຫຼັກຊັບໃນການຄ້ຳປະກັນການກູ້ຢືມໜີ້ສິນ ເຮັດໃຫ້ມີໜີ້ສິນຫຼາຍບໍສາມາດປະຄອງ ຫຼື ສືບຕໍ່ກິດຈະການໄດ້ ດັ່ງນັ້ນຈຶ່ງເກີດພາວະການລົ້ມລະລາຍ. ໃນກໍລະນີດັ່ງກ່າວ ການກຳນົດບຸລິມະສິດຕາມກົດໝາຍຈຶ່ງມີຄວາມຈຳເປັນ ແລະ ສຳຄັນຫຼາຍ. ຊັບສິນທີ່ຍັງມີ ຫຼື ຂາຍມາໄດ້ນັ້ນແມ່ນຕ້ອງໄດ້ເບິ່ງເງື່ອນໄຂສະຫວັດດີການແຮງງານໃຫ້ພະນັກງານເປັນອັນດັບທຳອິດກ່ອນ ເຊັ່ນ ມີພະນັກງານ 15 ຄົນ **ກ** ຕ້ອງໄດ້ຄິດໄລ່ເງິນເດືອນກ່ອນເປັນພື້ນຖານ ການທົດແທນເງິນຄ່າແຮງງານ ຫຼື ການຈ່າຍເງິນລ່ວງໜ້າ ໃຫ້ກ່ອນຕາມອັນດັບທີ່ໄດ້ກຳນົດໃນມາດຕາ 519 ຂອງປະມວນກົດໝາຍແພ່ງ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 4 ຂອງກົດໝາຍວ່າດ້ວຍການຄ້ຳປະກັນການປະຕິບັດສັນຍາ 2005.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 519 ຂອງປະມວນກົດໝາຍແພ່ງ.
ປະເພນີສານ ແລະ ອື່ນໆ	ສືບຕໍ່ຄົ້ນຄ້ວາ.

ມາດຕາ 519 ບຸລິມະສິດຂອງການຄ້ຳປະກັນຕາມກົດໝາຍ

ບຸລິມະສິດການຄ້ຳປະກັນຕາມກົດໝາຍ ໃຫ້ປະຕິບັດຕາມລຳດັບ ດັ່ງນີ້:

1. ການຈ່າຍຄ່າແຮງງານ, ເງິນເດືອນ ຫຼື ຜົນປະ�โຫຍດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍແຮງງານ;
2. ການເສຍ ພາສີ, ອາກອນ;
3. ການຈ່າຍອື່ນໆ ເພື່ອຮັບປະກັນຜົນປະ�โຫຍດຂອງຊາດ ຊຶ່ງບໍ່ກວມເອົາໜີ້ສິນ ຫຼື ຜົນປະ�โຫຍດອື່ນ ທີ່ເກີດຈາກສັນຍາລະຫວ່າງລັດກັບບຸກຄົນ ຫຼື ການຈັດຕັ້ງອື່ນ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນກ່ຽວກັບປະເພດການຄ້ຳປະກັນຕາມກົດໝາຍ ລວມທັງລຳດັບບຸລິມະສິດຂອງການຄ້ຳປະກັນຕາມກົດໝາຍ.

ຕົວຢ່າງ	**ກ** ເປັນພະນັກງານທີ່ ເຮັດວຽກນຳບໍລິສັດສົ່ງອອກສິນຄ້າ ຂອງ **ຂ** ເປັນເວລາ 5 ປີ, ຕໍ່ມາບໍລິສັດບໍ່ສາມາດ ດຳເນີນກິດຈະການຕໍ່ໄດ້ ຈຶ່ງເກີດສະພາວະລົ້ມລະລາຍ ດັ່ງນັ້ນ ເມື່ອຕົກໃນເງື່ອນໄຂດັ່ງກ່າວ **ກ** ໃນຖານະພະນັກງານແມ່ນຈະໄດ້ຮັບເງິນເດືອນ ຫຼື ຄ່າແຮງງານຈາກບໍລິສັດ **ຂ** ກ່ອນການປະຕິບັດພັນທະອື່ນໃດເຊັ່ນ ບໍລິສັດສົ່ງອອກສິນຄ້າ **ຂ** ຕ້ອງໄດ້ຊຳລະສະສາງໜີ້ຄ້າງຄາດັ່ງນີ້: 1. ກ່ອນອື່ນແມ່ນຕ້ອງໄດ້ຈ່າຍເງິນເດືອນ ຫຼື ຄ່າແຮງງານໃຫ້ພະນັງງານ ກຳມະກອນ ຫຼື ໃຫ້ **ກ** ກ່ອນ ຕາມເງິນເດືອນທີ່ໄດຮັບໃນຜ່ານມາ ອາດຈະລວມເງິນນະໂຍບາຍ ຫຼື ຜົນປະ�โยດໃດໜຶ່ງທີ່ເຂົາຄວນຈະ ໄດ້ຮັບນຳຕ່າງໆ ເຊັ່ນ ຄ່າລ່ວງເວລາ, ເງິນຄ່າອາຫານ, ຄ່ານ້ຳມັນທີ່ບໍລິສັດ **ຂ** ໄດ້ຄ້າງຈ່າຍຜ່ານມານັ້ນ. 2. ນອກຈາກນັ້ນ ບໍລິສັດ **ຂ** ແມ່ນຕ້ອງໄດ້ຄຳນຶງເຖິງການປະຕິບັດພັນທະ ຕໍ່ລັດ ເຊັ່ນ: ການຈ່າຍຄ່າພາສີ, ການເສຍອາກອນຕ່າງໆ ຕາມຄວາມ ເປັນຈິງ, ຄ່າອາກອນຊົມໃຊ້, ອາກອນມູນຄ່າເພີ່ມ ຫຼື ການເສຍປະຕັງ ເປັນຕົ້ນໃຫ້ແກ່ລັດ; 3. ບໍລິສັດ **ຂ** ຕ້ອງໄດ້ປະຕິບັດພັນທະອື່ນໂດຍການຈ່າຍໜີ້ສິນທີ່ພົວພັນ ເຖິງຜົນປະ�โยດລວມຂອງຊາດ ຊຶ່ງບໍລິສັດເຮັດທຸລະກິດໃນການສົ່ງ ອອກສິນຄ້າທີ່ເກີດມາຈາກ ການປຸກກ້ວຍ ຊຶ່ງສິນຄ້າທີ່ສົ່ງອອກແມ່ນ ໝາກກ້ວຍ ສະນັ້ນການຈ່າຍເງິນເຂົ້າກອງທຶນເພື່ອປົກປັກຮັກສາສິ່ງ ແວດລ້ອມກໍເປັນເງື່ອນໄຂໜຶ່ງທີ່ສຳຄັນ ແລະ ຈຳເປັນໃນການໃຊ້ຈ່າຍ ເຂົ້າສ່ວນລວມເຊັ່ນດຽວກັນກັບການປະຕິບັດພັນທະ ຈ່າຍຄ່າໄຟຟ້າ ຈ່າຍຄ່ານ້ຳປະປາເປັນຕົ້ນ. ຊັບສິນທີ່ນຳມາປະຕິບັດພັນທະ ຫຼື ຕ້ອງປະຕິບັດຕາມກົດໝາຍ ໃນນັ້ນແມ່ນ ການລວມເອົາ ຊັບສິນຂອງບໍລິສັດ **ຂ** ແມ່ນຊັບສິນທັງໝົດ ລວມທັງເງິນໃນບັນຊີ ແລະ ເຄື່ອງອຸປະກອນຕ່າງໆ)
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 4 ແລະ 7ຂອງກົດໝາຍວ່າດ້ວຍການຄ້ຳປະກັນ ການປະຕິບັດສັນຍາ 2005 ໃນສອງມາດຕານີ້ ໄດ້ຈັດແບ່ງອອກໂດຍການກຳ ນົດບຸລິມະສິດການຄ້ຳປະກັນຕາມກົດໝາຍອອກມາເປັນມາດຕາສະເພາະ ເພື່ອ ໃຫ້ເປັນການເຂົ້າໃຈງ່າຍໃນການຈັດຕັ້ງປະຕິບັດບຸລິມະສິດ ແລະ ເຫດສຳຄັນ ແມ່ນເພື່ອຮັບປະກັນໃຫ້ສິດທິມະນຸດໄດ້ຮັບການປົກປ້ອງທາງດ້ານແຮງງານ ເຫື່ອແຮງ ແລະ ມັນສະໝອງຕໍ່ກັບວຽກງານແມ່ນໃຫ້ໄດ້ຮັບການປະຕິບັດໃນ ດ້ານແຮງງານ, ເງິນເດືອນ ນະໂຍບາຍຕ່າງໆຢ່າງຖືກຕ້ອງ ແລະ ແທດເໝາະກັບ ເງື່ອນໄຂສະພາບຂອງສັງຄົມ ເພື່ອແກ້ໄຂເງື່ອນໄຂການດຳລົງຊີວິດໃນແງ່ມະນຸດ ຊະທຳ ຊຶ່ງໃນນັ້ນກວມ ລວມໄປເຖິງຜົນປະ�โยດລວມຊອງຊາດ ບຸລິມະສິດ ຕາມກົດໝາຍແມ່ນບໍ່ລວມເຖິງຜົນປະ�โยດອື່ນທີ່ເກີດຈາກສັນຍາລະຫວ່າງ ລັດກັບບຸກຄົນ ຫຼື ການຈັດຕັ້ງອື່ນໆ ໃນກໍລະນີດັ່ງກ່າວແມ່ນອີງຕາມກົດໝາຍ ວ່າດ້ວຍການຟື້ນຟູ ແລະ ການລົ້ມລະລາຍຂອງວິສາຫະກິດ.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງ ຂອງປະເທດອື່ນ	ມາດຕາ 306 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 518 ຂອງປະມວນກົດໝາຍແພ່ງ; ມາດຕາ 84 ກົດໝາຍວ່າດ້ວຍ ການຟື້ນຟູ ແລະ ການລົ້ມລະລາຍຂອງວິສາຫະກິດ ປີ 2019.
ປະເພນີສານ ແລະ ອື່ນໆ	ສືບຕໍ່ຄົ້ນຄ້ວາ.

ໝວດທີ 3
ການຄ້ຳປະກັນຕາມສັນຍາ

ມາດຕາ 520 ການຄ້ຳປະກັນຕາມສັນຍາ

ການຄ້ຳປະກັນຕາມສັນຍາ ແມ່ນການຕົກລົງຮັບປະກັນການໃຊ້ແທນໜີ້ສິນ ຫຼື ການປະຕິບັດພັນທະ ລະຫວ່າງເຈົ້າໜີ້ກັບລູກໜີ້ ຫຼື ການຕົກລົງການໃຊ້ແທນໜີ້ສິນ ຫຼື ການປະຕິບັດພັນທະແທນລູກໜີ້ໂດຍ ບຸກຄົນ ຫຼື ນິຕິບຸກຄົນໃດໜຶ່ງ.

ການຄ້ຳປະກັນຕາມສັນຍາ ມີສອງ ຮູບການ ຄື:

1. ການຄ້ຳປະກັນຕາມສັນຍາດ້ວຍຊັບ;
2. ການຄ້ຳປະກັນຕາມສັນຍາດ້ວຍບຸກຄົນ ຫຼື ນິຕິບຸກຄົນ.

ການຄ້ຳປະກັນຕາມສັນຍາດ້ວຍຊັບ ແມ່ນການຕົກລົງລະຫວ່າງເຈົ້າໜີ້ກັບລູກໜີ້ ຫຼືບຸກຄົນທີສາມ ຕາມຮູບການຈຳນຳ ຫຼື ຈຳນອງ ຊຶ່ງໄດ້ກຳນົດໄວ້ໃນປະມວນກົດໝາຍສະບັບນີ້.

ການຄ້ຳປະກັນຕາມສັນຍາດ້ວຍບຸກຄົນ ຫຼື ນິຕິບຸກຄົນ ແມ່ນສັນຍາຊຶ່ງບຸກຄົນ ຫຼື ນິຕິບຸກຄົນໃດໜຶ່ງ ໄດ້ຕົກລົງໃຊ້ແທນໜີ້ສິນ ຫຼື ການປະຕິບັດພັນທະອື່ນຕາງລູກໜີ້ໃນກໍລະນີທີ່ລູກໜີ້ບໍ່ປະຕິບັດພັນທະອື່ນ ດ້ວຍຕົນເອງ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນຄວາມໝາຍ ແລະ ປະເພດຂອງການຄ້ຳປະກັນຕາມສັນຍາ.
ຕົວຢ່າງ	**1. ກ** ເຮັດສັນຍາກູ້ຢືມເງິນ 1.000.000 ກີບ ກັບ **ງ** ໂດຍມີການຕົກລົງໃນ ສັນຍາວ່າ ພາຍໃນສາມເດືອນ ແມ່ນຈະເອົາເງິນມາສົ່ງຄືນ ແລະ ໄດ້ເອົາສາຍແຂນ ຄຳນ້ຳໜັກ 1 ບາດ ໄປຈຳນຳໄວ້ ແລະ ໄດ້ມອບສາຍແຂນເພື່ອເປັນສິ່ງຈຳນຳໃຫ້ **ງ,** ຖ້າກາຍກຳນົດແມ່ນຈະໃຫ້ຂາຍສາຍແຂນນັ້ນໃຊ້ແທນໜີ້ສິນດັ່ງກ່າວ ດ້ວຍ ການເຮັດສັນຍາຄ້ຳປະກັນດ້ວຍຊັບ. **2.** ນອກຈາກນັ້ນໃນກໍລະນີທີ່ **ກ** ຫາກບໍ່ມີຊັບຫຍັງມາຈຳເອົາເງິນແລ້ວ **ກ** ຍັງ ສາມາດຕົກລົງກັບ **ງ** ວ່າ ສາມາດເອົາບຸກຄົນໃດໜຶ່ງມາຄ້ຳປະກັນການກູ້ຢືມເງິນ ສິບລ້ານໄດ້ອີກ ເຊັ່ນ ເອົາຫົວໜ້າ **ຄ** ມາເຊັນຮັບຮູ້ ຫຼື ຄ້ຳປະກັນໃຫ້ກໍໄດ້ ໃນການເຊັນຮັບຮູ້ ຫຼື ຄ້ຳປະກັນແທນໃຫ້ **ກ** ນັ້ນ, ບຸກຄົນຜູ້ຄ້ຳປະກັນແມ່ນຕ້ອງ ຕົກລົງໃນການໃຊ້ແທນ ຫຼື ການປະຕິບັດພັນທະໃດໜຶ່ງຕາງລູກໜີ້ ຖ້າຫາກວ່າ ລູກໜີ້ຫາກບໍ່ໃຊ້ແທນໜີ້ສິນນັ້ນ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 5 ຂອງກົດໝາຍວ່າດ້ວຍການຄ້ຳປະກັນການ ປະຕິບັດສັນຍາ ໄດ້ປັບປຸງບາງເນື້ອໃນຄຳສັບ ໃນວັກທີ່ສາມ ການຄ້ຳປະກັນຕາມ ສັນຍາດ້ວຍຊັບ ຊຶ່ງໃນຮູບການຄ້ຳປະກັນດ້ວຍຊັບນັ້ນ ແມ່ນແບ່ງອອກ ຫຼື ກຳນົດ ເພື່ອຄວາມເຂົ້າໃຈໃນຮູບການເປັນການຈຳນຳ ແລະ ການຈຳນອງ ເພື່ອຄວາມ ສະດວກ ແລະ ສາມາດເລືອກການຄ້ຳປະກັນດ້ວຍຊັບທີ່ເປັນສັງຫາຣິມະຊັບ ແລະ ອະສັງຫາຣິມະຊັບ ໃນການຄ້ຳປະກັນການນັ້ນ.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງ ຂອງປະເທດອື່ນ	ມາດຕາ342-398/22 (ການຈຳນຳ ແລະ ການຈຳນອງ) ມາດຕາ446-465/10 (ການຄ້ຳປະກັນດ້ວຍບຸກຄົນ ຫຼື ນິຕິບຸກຄົນອື່ນ) ຂອງປະມວນກົດໝາຍແພ່ງ ຍີ່ປຸ່ນ.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 521 ຊັບທີ່ນຳມາຄ້ຳປະກັນ

ຊັບທີ່ນຳມາຄ້ຳປະກັນ ມີ ສັງຫາລິມະຊັບ ຫຼື ອະສັງຫາລິມະຊັບ ຫຼື ສິດ.

ສັງຫາລິມະຊັບ ທີ່ສາມາດນຳມາຄ້ຳປະກັນ ລວມມີ:

1. ວັດຖຸມີຄ່າ;

2. ກົນຈັກ;
3. ຍານພາຫະນະ;
4. ສິນຄ້າໃນສາງ ຫຼື ວັດຖຸດິບ ເພື່ອການຜະລິດ;
5. ຜົນຜະລິດກະສິກຳ;
6. ສິນຄ້າອຸປະໂພກ, ບໍລິໂພກ;
7. ສັງຫາລິມະຊັບປະເພດອື່ນ ຕາມການຕົກລົງຂອງຄູ່ສັນຍາ.

ອະສັງຫາລິມະຊັບ ທີ່ສາມາດນຳມາຄ້ຳປະກັນ ລວມມີ:

1. ສິດນຳໃຊ້ທີ່ດິນຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ;
2. ກຳມະສິດ ໃນຫ້ອງຊຸດ, ສິ່ງປຸກສ້າງ ເຊັ່ນ ເຮືອນ, ຕຶກ, ອາຄານ;
3. ຊັບສິນທີ່ຕິດພັນກັບສັນຍາເຊົ່າ ຫຼື ສຳປະທານທີ່ດິນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ຫຼືສັນຍາທີ່ກ່ຽວຂ້ອງ.

ສິດ ທີ່ສາມາດນຳມາຄ້ຳປະກັນໄດ້ ລວມມີ:

1. ໜີ້ຕ້ອງຮັບ;
2. ເອກະສານການເງິນທີ່ສາມາດປ່ຽນມືໄດ້ ເຊັ່ນ ພັນທະບັດ, ໃບສັນຍາໃຊ້ໜີ້;
3. ບັນຊີເງິນຝາກ;
4. ຊັບສິນທາງປັນຍາ;
5. ສິດອື່ນ ຕາມການຕົກລົງຂອງຄູ່ສັນຍາ.

ຈຸດປະສົງ	ເພື່ອກຳນົດກ່ຽວກັບຊັບທີ່ເປັນເປົ້າໝາຍຂອງການຄ້ຳປະກັນຕາມສັນຍາ.
ຕົວຢ່າງ	**ສັງຫາຣິມະຊັບລວມມີ ດັ່ງນີ້** 1. ວັດຖຸມີຄ່າເຊັ່ນ: ຄຳ, ເງິນຮາງ, ໂມງ, ສາຍແອວທອງນາກ, ສາຍແອວເງິນ, ໂທລະພາບ, ໂນດບຸກ, ໂທລະສັບມືຖື ແລະ ອື່ນ; 2. ກົນຈັກ ເຊັ່ນເຄື່ອງທີ່ໃຊ້ໃນການຜະລິດ, ເຄື່ອງຕັດຍົບ, ເຄື່ອງປັ້ນນ້ຳ, ເຄື່ອງກົນຈັກການກະເສດຕ່າງໆເປັນຕົ້ນ ແລະ ອື່ນໆ; 3. ຍານພາຫະນະ ເຊັ່ນ ລົດຖີບ, ລົດຈັກ, ລົດໄຫຍ່ ແລະ ອື່ນໆ 4. ສິນຄ້າໃນສາງ ຫຼື ວັດຖຸດິບ ເພື່ອການຜະລິດ ເຊັ່ນ ສິນຄ້າສາງບໍລິໂພກ, ສາງນ້ຳ, ສາງເບັຍ, ສາງຍານພາຫະນະ ແລະ ອື່ນໆ 5. ຜົນຜະລິດກະສິກຳ ເຊັ່ນ ເຂົ້າປູກ, ໝາກຜົນຈາກເຄື່ອງປູກຂອງຝັງຕ່າງໆ 6. ສິນຄ້າອຸປະໂພກ, ບໍລິໂພກ ເຊັ່ນ ສິນຄ້າໃນການໃຊ້ສອຍຕ່າງໃນຊີວິດປະຈຳວັນ 7. ສັງຫາລິມະຊັບປະເພດອື່ນ ຕາມການຕົກລົງຂອງຄູ່ສັນຍາ ເຊັ່ນ ຊ້າງ ມ້າ ເຮືອແພ ເຮືອບິນຕ່າງໆ ເປັນຕົ້ນ **ອະສັງຫາລິມະຊັບ ທີ່ສາມາດນຳມາຄ້ຳປະກັນ ລວມມີ:** 1. ສິດນຳໃຊ້ຂອງບຸກຄົນ ຫຼື ນິຕິບຸກຄົນ ຫຼື ການຈັດຕັ້ງ; 1. ກຳມະສິດໃນຫ້ອງຊຸດ, ສິ່ງປຸກສ້າງ ເຊັ່ນ ເຮືອນ, ຕຶກ, ອາຄານ; 1. ຊັບສິນທີ່ຕິດພັນກັບສັນຍາເຊົ່າ ຫຼື ສຳປະທານທີ່ກິນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ຫຼື ສັນຍາທີ່ກ່ຽວຂ້ອງ ນອກຈາກນີ້ ຍັງມີສິດ ທີ່ສາມາດນຳມາຄ້ຳປະກັນໄດ້ ລວມມີ: 1. ໜີ້ຕ້ອງຮັບ; 2. ເອກະສານການເງິນທີ່ສາມາດປ່ຽນມືໄດ້ເຊັ່ນ ພັນທະບັດໃບສັນຍາໃຊ້ໜີ້; 3. ບັນຊີເງິນຝາກ; 4. ຊັບສິນທາງປັນຍາ; 5. ສິດອື່ນ ຕາມການຕົກລົງຂອງຄູ່ສັນຍາ.

	1. ການຈຳນອງທີ່ດິນ: ໃນວັນທີ 12 ທັນວາ 2008 **ກ** ເອົາດິນໜຶ່ງຕອນ ໄປຈຳນອງນຳ **ຂ** ເພື່ອຄ້ຳປະກັນການກູ້ຢືມເງິນເປັນຈຳນວນ 300.000.000 ກີບ ໃນກຳນົດເວລາ 3 ປີ, ດັ່ງນັ້ນທັງສອງໄດ້ເຮັດສັນຍານຳກັນ ຊຶ່ງໃນສັນຍາໄດ້ກຳນົດຢ່າງລະອຽດກ່ຽວກັບທີ່ດິນຕັ້ງຢູ່ບ້ານ **ກ** ເມືອງ **ຂ** ແຂວງ **ຄ** ຕາມໃບຕາດິນເລກທີ 000 ລົງວັນທີ 12 ທັນວາ 2000 ມີເນື້ອທີທັງໝົດ 1800 ຕາເມັດ ອອກຊື່ **ກ** ນອກຈາກນັ້ນ,ໃນສັນຍາຍັງໄດ້ກຳນົດວ່າໃນດິນຕອນດັ່ງກ່າວມີ ສິ່ງປຸກສ້າງຕັ້ງຢູ່ຄືເຮືອນຢູ່ຂອງ **ກ** ໃນການຈຳນອງຄັ້ງນີ້ຄູ່ສັນຍາ **ກ** ແລະ **ຂ** ໄດ້ກຳນົດມູນຄ່າຊັບໃນສັນຍາຢ່າງລະອຽດ ເຊັ່ນ ທີ່ດິນມີມູນຄ່າ 350.000.000 ກີບ ແລະ ເຮືອນທີ່ຕັ້ງໃນທີ່ດິນນັ້ນ ແມ່ນມີມູນຄ່າ 250.000.000 ກີບ ລວມມູນຄ່າເປັນ ຈຳນວນ 600.000.000 ກີບ, ໃນດ້ານຫຼັງຂອງໃບຕາດິນຍັງໄດ້ມີການບັນທຶກກຳກັບວ່າ ທີ່ດິນທີ່ ອອກ ຊື່ **ກ** ແມ່ນໄດ້ນຳໃຊ້ ຫຼື ນຳເອົາມາຄ້ຳປະກັນການປະຕິບັດສັນຍາການກູ້ຢືມນຳ **ຂ** ໂດຍການຈົດທະບຽນການຄ້ຳປະກັນນຳຂະແໜງຄຸ້ມຄອງທີ່ດິນບ່ອນທີ່ຂຶ້ນກັບທີ່ດິນນັ້ນຕັ້ງຢູ່ການກຳນົດຈະແຈ້ງໃນສັນຍາການຈຳນອງອະສັງຫາຣິມະຊັບນີ້ຈະມີຜົນດີ ແລະ ເປັນເງື່ອນໄຂໃຫ້ການ**ຈັ**ດຕັ້ງ ແລະ ປະຕິບັດສັນຍາໄດ້ຢ່າງສະດວກ ແລະ ງ່າຍດາຍ ໂດຍສະເພາະການກຳນົດຄຸນລັກສະນະຊັບ ແລະ ການຕີມູນຄ່າຂອງຊັບ. **2.** ໃນວັນທີ 12 ທັນວາ 2009 **ກ** ນຳເອົາທີ່ດິນເປົ່າວ່າງ (ທີ່ດິນເປົ່າວາງບໍ່ມີສິ່ງປຸກສ້າງໃດໆ) ໄປຈຳນອງນຳ **ຂ** ເພື່ອຮັບປະກັນສັນຍາກູ້ຢືມເງິນ ຈຳນວນ 400.000. 000 ກີບ ກຳນົດເວລາ 3 ປີ ໃນສັນຍາກໍໄດ້ກຳນົດລະອຽດສະຖານທີ່ຕັ້ງ ເນື້ອທີດິນ ແລະ ຕີມູນຄ່າດິນເປັນເງິນຈຳນວນ 600.000.000 ກີບ ແລະ ສັນຍາກໍໄດ້ຈົດທະບຽນການກູ້ຢືມນຳຂະແໜງຄຸ້ມຄອງທີ່ດິນ ບ່ອນທີ່ດິນນັ້ນຕັ້ງຢູ່ ໂດຍຖືກຕ້ອງຕາມຂັ້ນຕອນທຸກຢ່າງແລ້ວ, ຕໍ່ມາ ປີ 2010 **ກ** ໄດ້ມາປຸກເຮືອນໃສ່ດິນຕອນດັ່ງກ່າວທີ່ນຳໄປຈຳນອງກັບ **ຂ**(ເຈົ້າໜີ້) ໂດຍບໍ່ໄດ້ແຈ້ງໃຫ້ຊາບ. ເມື່ອເຖິງກຳນົດເວລາສິ້ນສຸດສັນຍາ **ກ** ບໍ່ສາມາດປະຕິບັດພັນທະ ຫຼື ບໍ່ມີຄວາມສາມາດໃນການໃຊ້ແທນໜີ້ສິນ **ຂ** ດັ່ງນັ້ນ, ເຈົ້າໜີ້ຈຶ່ງຕ້ອງໄດ້ນຳເອົາຊັບຄ້ຳປະກັນການຈຳນອງກໍຄືທີ່ດິນເປົ່າວາງຕອນດັ່ງກ່າວ ມາຕີມູນຄ່າໃນການໃຊ້ແທນຄືນໜີ້ສິນ. ເມື່ອເບິ່ງຕົວຈິງແລ້ວໃນດິນເປົ່າວ່າງທີ່ນຳມາຈຳນອງນັ້ນ ຊຶ່ງປັດຈຸບັນແມ່ນມີເຮືອນຕັ້ງໃສ່ ດັ່ງນັ້ນ **ກ** (ລູກໜີ້) ຕ້ອງການຕີມູນຄ່າຊັບທີ່ດິນ ພ້ອມເຮືອນທີ່ສ້າງຂຶ້ນຫຼັງສັນຍາຈຳນອງນັ້ນ ໂດຍອີງໃສ່ມູນຄ່າທີ່ດິນເບື້ອງຕົ້ນ ຈຳນວນ 600.000. 000 ກີບ ແລະ ເຮືອນປຸກສ້າງໃໝ່ນັ້ນ ຈຳນວນ 300.000. 000 ກີບ ລວມມູນຄ່າທີ່ດິນ ແລະ ເຮືອນ ຈຳນວນ 900.000. 000 ກີບ. ໃນກໍລະນີດັ່ງກ່າວ ແມ່ນໃຫ້ຖືວ່າ ເຮືອນທີ່ປຸກສ້າງໃໝ່ພາຍຫຼັງການເຮັດສັນຍາຈຳນອງນັ້ນແມ່ນໃຫ້ຄິດໄລ່ລວມໃສ່ທີ່ດິນຕາມມູນຄ່າຕົວຈິງ ໃນກໍລະນີຫາກບໍ່ມີຄວາມສາມາດປະຕິບັດພັນທະດ້ວຍການໃຊ້ແທນໜີ້ສິນຕາມມາດຕາອ້າງອີງຂ້າງລຸ່ມນີ້. ສະນັ້ນ, ໃນການຈະປະກາດຂາຍຊັບມາທົດແທນການຊຳລະໜີ້ສິນ ຕ້ອງໄດ້ມີການຄິດໄລ່ມູນຄ່າດິນຈຳນອງ ແລະ ເຮືອນທີ່ປຸກສ້າງພາຍຫຼັງນັ້ນ ສ່ວນວ່າຈະມີມູນຄ່າໜ້ອຍ ຫຼື ຫຼາຍກວ່າໜີ້ສິນນັ້ນ ຫຼັງຈາກຂາຍໄດ້ຖ້າມີຈຳນວນມູນຄ່າເຫຼືອກໍຕ້ອງໄດ້ສົ່ງລູກໜີ້ ແລະ ຖ້າບໍ່ພໍກໍຕ້ອງໄດ້ຊອກຫາ ມາຕື່ມໃສ່ ຈົນກ່ວາຈະຄົບຕາມຈຳນວນໜີ້ສິນນັ້ນ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງ ມາດຈາກ ມາດຕາ 4 ຂອງດຳລັດວ່າດ້ວຍການຄ້ຳປະກັນສັນຍາ ເພື່ອຄວາມສະດວກ ແລະ ງ່າຍດາຍໃນການກຳນົດການຄ້ຳປະກັນຊັບປະເພດຕ່າງໆ ຂອງເຈົ້າໜີ້ ແລະ ລູກໜີ້ ວ່າຊັບໃດນອນຢູ່ໃດໝວດໝູ່ໃດຂອງການຄ້ຳປະກັນໄດ້.

ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 292 ຂອງປະມວນກົດໝາຍແພ່ງຫວຽດນາມ 2015.
ມາດຕາອ້າງອີງ	ມາດຕາ 228 , 229, 234 ແລະ 307 ຂອງປະມວນກົດໝາຍແພ່ງ.
ປະເພນີສານ ແລະ ອື່ນໆ	ອີງຕາມປະມວນກົດໝາຍຍີ່ປຸ່ນແລ້ວ: ແມ່ນມີການປະຕິບັດທີ່ແຕກຕ່າງຈາກປະມວນກົດໝາຍແພ່ງ. *ສຳລັບຕົວຢ່າງ2, ຖ້ານຳໃຊ້ປະມວນກົດໝາຍແພ່ງຍີ່ປຸ່ນແກ້ໄຂບັນຫາກໍຈະເປັນຄືດັ່ງຕໍ່ໄປນີ້. ໂຈດຂອງຕົວຢ່າງ 2 ມີຄື: ໃນວັນທີ 12/12/2009 **ກ** ໄດ້ເອົາດິນເປົ່າວ່າງ (ທີ່ດິນເປົ່າວ່າງບໍ່ມີສິ່ງປຸກສ້າງໃດໆ) ຂອງ **ກ** ໄປຈຳນອງເພື່ອຮັບປະກັນສັນຍາກູ້ຢືມເງິນ ຈຳນວນ 400.000.000 ກີບ ກຳນົດເວລາ 3 ປີ. ໃນສັນຍາດັ່ງກ່າວ, ໄດ້ກຳນົດລະອຽດສະຖານທີ່ຕັ້ງ, ເນື້ອທີ່ຂອງຕອນດິນ ແລະ ຕີມູນຄ່າເປັນເງິນ ຈຳນວນ 600.000.000 ກີບ ແລະ ສັນຍາກໍໄດ້ຈົດທະບຽນການກູ້ຢືມນຳຂະແໜງຄຸ້ມຄອງທີ່ດິນບ່ອນທີ່ດິນນັ້ນຕັ້ງຢູ່ ໂດຍຖືກຕ້ອງຕາມຂັ້ນຕອນທຸກຢ່າງແລ້ວ, ຕໍ່ມາ ປີ 2010 **ກ** ໄດ້ມາປຸກເຮືອນໃສ່ດິນຕອນດັ່ງກ່າວທີ່ນຳໄປຈຳນອງກັບ ຂ (ເຈົ້າໜີ້) ນັ້ນໂດຍທີ່ບໍ່ໄດ້ແຈ້ງໃຫ້ (**ຂ**) ຊາບ, ກໍລະນີນຳໃຊ້ປະມວນກົດໝາຍຍີ່ປຸ່ນ ບັນຫານີ້ແມ່ນສາມາດແກ້ໄຂໄດ້ໂດຍ 2 ວິທີຄື: **ວິທີທີໜຶ່ງ:** ອີງຕາມມາດຕາ 389 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ, **ຂ** ນຳໃຊ້ສິດຕໍ່ການຈຳນອງຂອງຕອນດິນດັ່ງກ່າວ ໂດຍການເອົາຕອນດິນ (ຕີມູນຄ່າເປັນເງິນ600.000.000ກີບ) ພ້ອມດ້ວຍສິ່ງປຸກສ້າງ (ຕີມູນຄ່າເປັນເງິນ ຈຳນວນ 300.000.000ກີບ) ໄປຂາຍ ພ້ອມທັງມີບູລິມະສິດໃນການໄດ້ຮັບການໃຊ້ແທນໜີ້ສິນຈາກເງິນທີ່ໄດ້ຈາກການຂາຍດັ່ງກ່າວແຕ່ໃນກໍລະນີນີ້, **ຂ** ແມ່ນມີບູລິມະສິດແຕ່ໃນສ່ວນຂອງເງິນທີ່ໄດ້ຈາກການຂາຍດິນເທົ່ານັ້ນ. ສະນັ້ນ, ໃນຈຳນວນເງິນ ຈຳນວນ900.000.000 ກີບ ທີ່ໄດ້ຈາກການຂາຍທີ່ດິນ ແລະ ເຮືອນຂອງ **ກ** ນັ້ນ, **ຂ** ແມ່ນມີບູລິມະສິດໄດ້ຮັບການໃຊ້ແທນໜີ້ສິນຈຳນວນ 400.000.000 ກີບ ຈາກສ່ວນທີ່ຂາຍດິນມູນຄ່າ ຈຳນວນ600.000.000 ລ້ານກີບ ເທົ່ານັ້ນ. **ວິທີທີສອງ: ຂ** ນຳໃຊ້ສິດຕໍ່ການຈຳນອງຂອງຕອນດິນເພື່ອຂາຍທີ່ດິນແລະມີບູລິມະສິດໄດ້ຮັບການໃຊ້ແທນໜີ້ສິນຈາກເງິນທີ່ໄດ້ຈາກການຂາຍດັ່ງກ່າວ **ກໍລະນີ ຂ** ນຳໃຊ້ສິດຕໍ່ການຈຳນອງແລ້ວ **ຄ** ກໍໄດ້ຊື້ເອົາດິນຕອນດັ່ງກ່າວເປັນເງິນ 500.000.000 ກີບ **ຂ** ມີບູລິມະສິດໃນການໄດ້ຮັບການໃຊ້ແທນໜີ້ສິນຈຳນວນ 400.000.000ກີບ ຈາກເງິນທີ່ຂາຍໄດ້ ຈຳນວນ 500.000.000 ກີບນີ້. **ຄ** ຜູ້ຊື້ດິນໄປນັ້ນ ສາມາດທວງຕໍ່ **ກ** ທີ່ປຸກສ້າງເຮືອນໃສ່ພາຍຫຼັງການຈົດທະບຽນການຈຳນອງໃຫ້ມ້າງສິ່ງປຸກສ້າງດັ່ງກ່າວແລະມອບສິ່ງດິນໃຫ້ຕົນ ໂດຍເຮັດເປັນດິນເປົ່າວ່າງ ເພື່ອໃຫ້ສາມາດນຳໃຊ້ໃນວັດຖຸປະສົງອື່ນໄດ້. ຫຼື ອີກອັນໜຶ່ງແມ່ນສາມາດຕໍ່ລອງກັບ **ກ** ເພື່ອເຮັດເປັນສັນຍາເຊົ່າທີ່ດິນ ຫຼື ສັນຍາສິດເໜືອທີ່ດິນກັບ **ກ**. ແລ້ວໃຫ້ **ກ** ຈ່ າຍຄ່ານຳໃຊ້ທີ່ດິນຕອນດັ່ງກ່າວໃຫ້.

ມາດຕາ 522 ການກຳນົດລັກສະນະ ແລະ ການຕີມູນຄ່າຂອງຊັບ

ຊັບທີ່ນຳໄປຄ້ຳປະກັນນັ້ນ ຕ້ອງໄດ້ກຳນົດລັກສະນະ ຂອງຊັບໄວ້ໃນສັນຍາ.

ຊັບທີ່ນຳໄປຄ້ຳປະກັນນັ້ນ ອາດກຳນົດມູນຄ່າ ຕາມການຕົກລົງຂອງຄູ່ສັນຍາ.

ຈຸດປະສົງ	ເພື່ອກຳນົດໃຫ້ຮັບຮູ້ເຖິງ ຮູບຮ່າງ ຄຸນລັກສະນະ ຂອງຊັບທີ່ນຳມາຄ້ຳປະກັນ ເພື່ອໃຫ້ຄູ່ສັນຍາມີສະຕິ ໃນການກຳນົດຄວາມຊັດເຈນຂອງຊັບທີ່ນຳມາຄ້ຳປະກັນນັ້ນ ເພື່ອບໍ່ໃຫ້ມີຂໍ້ຂັດແຍ້ງ.

ຕົວຢ່າງ	**ກ** ໄດ້ເອົາ ດິນນາ ຂະໜາດກວ້າງ 100 ແມັດ ຍາວ 100 ແມັດ ເນື້ອທີ່ 10,000 ຕາເມັດ, ຕາມໃບຕາດິນເລກທີ 0001 ຕັ້ງຢູ່ບ້ານ ກ, ເມືອງ ຂ, ແຂວງ ຄ ອອກຊື່ **ກ** ເພື່ອເປັນຫຼັກຊັບໃນການຈຳນອງການຄ້ຳປະກັນດ້ວຍເງິນກູ້ຢືມກັບທະນາຄານ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກມາດຕາ 18 ແລະ 22 ຂອງກົດໝາຍວ່າດ້ວຍການຄ້ຳປະກັນການປະຕິບັດສັນຍາ 2005.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ສືບຕໍ່ຄົ້ນຄ້ວາ.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄ້ວາ.

ມາດຕາ 523 ຊັບດຽວທີ່ນຳໄປຄ້ຳປະກັນກັບເຈົ້າໜີ້ຫຼາຍຄົນ

ຊັບດຽວທີ່ນຳໄປຄ້ຳປະກັນກັບເຈົ້າໜີ້ຫຼາຍຄົນແມ່ນ ການຄ້ຳປະກັນການໃຊ້ແທນຫຼາຍໜີ້ສິນ ຫຼື ຫຼາຍພັນທະດ້ວຍຊັບດຽວ ກັບເຈົ້າໜີ້ຫຼາຍຄົນ ຊຶ່ງເປັນຮູບການໜຶ່ງຂອງການຄ້ຳປະກັນຕາມສັນຍາ ເຊັ່ນ ການຈຳນຳ ແລະ ການຈຳນອງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 525 ຂອງປະມວນກົດໝາຍສະບັບນີ້.

ການນຳຊັບດຽວໄປຄ້ຳປະກັນກັບເຈົ້າໜີ້ຫຼາຍຄົນມີ ເງື່ອນໄຂ ດັ່ງນີ້:

1. ຊັບທີ່ນຳໄປຄ້ຳປະກັນ ຕ້ອງແມ່ນຊັບຂອງລູກໜີ້ ຫຼື ໃນກໍລະນີທີ່ເປັນຂອງບຸກຄົນອື່ນ ກໍຕ້ອງມີການເຫັນດີ ຢ່າງເປັນລາຍລັກອັກສອນ ໂດຍຖືກຕ້ອງຕາມກົດໝາຍໃຫ້ໄປຄ້ຳປະກັນ, ເວັ້ນເສຍແຕ່ກົດໝາຍທີ່ກ່ຽວຂ້ອງໄດ້ກຳນົດໄວ້ເປັນຢ່າງອື່ນ;
2. ຊັບທີ່ນຳໄປຄ້ຳປະກັນຕ້ອງມີມູນຄ່າເກີນໜີ້ສິນໃນເວລາຄ້ຳປະກັນ ລວມທັງການຄ້ຳປະກັນຜ່ານມາຕາມການຕົກລົງກັນລະຫວ່າງເຈົ້າໜີ້ ແລະ ລູກໜີ້ ຫຼື ຕາມການຕີມູນຄ່າຊັບໃນເວລານັ້ນຈາກອົງການຈັດຕັ້ງ ຫຼື ສະຖາບັນທີ່ກ່ຽວຂ້ອງ;
3. ຕ້ອງມີການກຳນົດ ຫຼື ລະບຸມູນຄ່າທີ່ຍັງເຫຼືອຂອງຊັບດຽວທີ່ນຳໄປຄ້ຳປະກັນຢ່າງຈະແຈ້ງໄວ້ໃນສັນຍາຄ້ຳປະກັນກັບເຈົ້າໜີ້ຜູ້ທຳອິດ ແລະ ເຈົ້າໜີ້ຜູ້ຖັດໄປ, ເວັ້ນເສຍແຕ່ໄດ້ມີການຕົກລົງກັນເປັນຢ່າງອື່ນໄວ້ໃນສັນຍາຄ້ຳປະກັນ;
4. ລູກໜີ້ ທີ່ໄດ້ນຳຊັບດຽວໄປຄ້ຳປະກັນຕ້ອງແຈ້ງໃຫ້ເຈົ້າໜີ້ຜູ້ທຳອິດຊາບ ກ່ຽວກັບການຄ້ຳປະກັນເພີ່ມ ແລະ ເຈົ້າໜີ້ຜູ້ໃໝ່ກ່ຽວກັບການຄ້ຳປະກັນຜ່ານມາເປັນລາຍລັກອັກສອນລ່ວງໜ້າຢ່າງໜ້ອຍ ສິບຫ້າວັນ ເພື່ອໃຫ້ເຈົ້າໜີ້ຜູ້ໃໝ່ໄດ້ພິຈາລະນາກ່ຽວກັບການຄ້ຳປະກັນເພີ່ມກັບຕົນ;
5. ໃນກໍລະນີທີ່ຊັບດຽວນັ້ນ ຫາກເປັນອະສັງຫາລິມະຊັບ, ເຈົ້າໜີ້ ແລະ ລູກໜີ້ ຕ້ອງໄດ້ຈົດທະບຽນການຄ້ຳປະກັນຄັ້ງທຳອິດກ່ອນ ຕາມທີ່ໄດ້ກຳນົດໃນມາດຕາ 562 ຂອງປະມວນກົດໝາຍສະບັບນີ້ ຈຶ່ງມີສິດນຳໄປຄ້ຳປະກັນເພີ່ມໄດ້ ແລະ ການຄ້ຳປະກັນເພີ່ມຄັ້ງຕໍ່ໄປ ກໍຕ້ອງໄດ້ຈົດທະບຽນ ຈຶ່ງມີສິດນຳໄປຄ້ຳປະກັນໄດ້.

ເຈົ້າໜີ້ແຕ່ລະຄົນ ທີ່ມີການຄ້ຳປະກັນດ້ວຍຊັບດຽວ ຈະໄດ້ຮັບບຸລິມະສິດຕາມທີ່ໄດ້ກຳນົດໄວ້ໃນມາດຕາ 524 ຂອງປະມວນກົດໝາຍສະບັບນີ້.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນກ່ຽວກັບເງື່ອນໄຂ, ຂັ້ນຕອນ, ລວມທັງຜົນຂອງການເອົາຊັບດຽວໄປນຳໃຊ້ເຂົ້າໃນຫຼາຍການຄ້ຳປະກັນ.
ຕົວຢ່າງ	**ກ** ມີທີ່ດິນ ຕາມໃບຕາດິນເລກທີ 02, ລົງວັນທີ 5 ທັນວາ 2000 ຊຶ່ງອີງຕາມລາຄາປະເມີນແມ່ນ ຄິດໄລ່ເປັນມູນຄ່າ ຈຳນວນ 700.000.000 ກີບ **ກ** ກູ້ຢືມເງິນ ຈຳນວນ 200.000.000 ກີບ ນຳ **ຂ** ໂດຍເອົາດິນຕອນດັ່ງກ່າວໄປ ຈຳນອງການຄ້ຳປະກັນ ແລະ ໄດ້ຈົດທະບຽນການຈຳນອງການຄ້ຳປະກັນ; **ກ** ກູ້ຢືມເງິນ ຈຳນວນ 200.000.000ກີບ ກັບ **ຄ** ໂດຍໄດ້ຈົດທະບຽນການ ຈຳນອງ ຄັ້ງທີສອງ ນຳພາກສ່ວນທີ່ກ່ຽວຂ້ອງ;

	ກ ກູ້ຢືມເງິນ ຈຳນວນ 100.000.000ກີບກັບ **ງ** ໂດຍໄດ້ຈົດທະບຽນການຈຳນອງຄັ້ງທີສາມ ນຳພາກສ່ວນທີ່ກ່ຽວຂ້ອງໝາຍຄວາມວ່າ ໃນທີ່ດິນຕອນດຽວນັ້ນແມ່ນສາມາດກູ້ຢືມເງິນນຳເຈົ້າໜີ້ຫຼາຍຄົນ ແຕ່ໃນການກູ້ຢືມແຕ່ລະຄັ້ງແມ່ນຕ້ອງໄດ້ແຈ້ງໃຫ້ເຈົ້າໜີ້ຜູ້ທຳອິດ ແລະ ເຈົ້າໜີ້ຜູ້ໃໝ່ ຮັບຮູ້ກ່ອນວ່າດິນຕອນດັ່ງກ່າວແມ່ນໄດ້ຮັບການຈົດທະບຽນການຈຳນອງມາກ່ອນແລ້ວ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງໃໝ່ຍ້ອນວ່າ ຜ່ານມາຕາມກົດໝາຍວ່າດ້ວຍການຄ້ຳປະກັນການປະຕິບັດສັນຍາ ປີ 2005 ກໍບໍ່ໄດ້ກຳນົດ ຕໍ່ຊັບທີ່ນຳໄປຄ້ຳປະກັນນັ້ນ ວ່າສາມາດຄ້ຳນຳໄດ້ຫຼາຍເຈົ້າໜີ້ ຫຼື ບໍ? ແຕ່ອີງຕາມປະເພນີ ຫຼື ເຄີຍປະຕິບັດກັນມາແລ້ວສັງເກດເຫັນໄດ້ວ່າ ເຈົ້າໜີ້ສ່ວນໃຫ່ຍແມ່ນບໍ່ຍິນຍອມ ຫຼື ເຫັນດີໃຫ້ລູກໜີ້ນຳເອົາຊັບທີ່ມາຄ້ຳນຳຕົນແລ້ວນັ້ນ ໄປເປັນຫຼັກຊັບຄ້ຳນຳບຸກຄົນອື່ນໄດ້ອີກ ເຖິງແມ່ນວ່າຊັບທີ່ມາຄ້ຳປະກັນນັ້ນມີມູນຄ່າທີ່ສູງກ່ວາໜີ້ສິນຫຼາຍປານໃດກໍຕາມ. ສະນັ້ນ ການກຳນົດມາດຕາດັ່ງກ່າວ ແມ່ນເພື່ອປົກປ້ອງຊັບສິນ ສິດ ແລະ ຜົນປະ�โຫຍດທີ່ລູກໜີ້ ຍັງສາມາດເຮັດຫຼື ຈັດຕັ້ງປະຕິບັດ ຫຼື ດຳເນີນການຕໍ່ໄດ້ໃນຊັບສິນຂອງຕົນທີ່ຍັງເຫຼືອຫຼາຍເມື່ອທຽບກັບການເງິນກູ້ຢືມທີ່ໄດ້ຢືມນັ້ນ. ອີກຢ່າງກໍເປັນການສົ່ງເສີມການຜະລິດການດຳເນີນທຸລະກິດໃຫ້ມີຄວາມສະດວກ ແລະ ຄ່ອງໂຕ ສາມາດຮັບປະກັນການໃຊ້ແທນໜີ້ສິນໄດ້ດ້ວຍການຄ້ຳປະກັນຊັບດຽວ ທີ່ມີການຈົດທະບຽນບຸລິມະສິດໄວ້.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 296 ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2015; ມາດຕາ 324 ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2005.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 524 ບຸລິມະສິດການຄ້ຳປະກັນຕາມສັນຍາ

ເຈົ້າໜີ້ທີ່ມີການຄ້ຳປະກັນຕາມສັນຍາ ດ້ວຍຊັບດຽວ ຈະໄດ້ຮັບການໃຊ້ແທນໜີ້ສິນ ຫຼື ປະຕິບັດພັນທະກ່ອນເຈົ້າໜີ້ອື່ນ ຕາມກໍລະນີ ດັ່ງນີ້:

1. ໃນບັນດາເຈົ້າໜີ້ ຜູ້ທີ່ໄດ້ຈົດທະບຽນການຄ້ຳປະກັນໄດ້ຄອບຄອງຊັບ ຫຼື ໄດ້ຄວບຄຸມສິດຄ້ຳປະກັນກ່ອນເຈົ້າໜີ້ຜູ້ອື່ນທີ່ຖືກຕ້ອງຕາມກົດໝາຍ ຜູ້ນັ້ນຈະມີບຸລິມະສິດ;
1. ໃນບັນດາເຈົ້າໜີ້ ທີ່ມີການຈົດທະບຽນການຄ້ຳປະກັນ, ຜູ້ທີ່ໄດ້ຈົດທະບຽນການຄ້ຳປະກັນກ່ອນເຈົ້າໜີ້ອື່ນຜູ້ນັ້ນຈະມີບຸລິມະສິດ;
1. ໃນບັນດາເຈົ້າໜີ້ທີ່ມີການຄ້ຳປະກັນ ຕໍ່ຊັບທີ່ບໍ່ໄດ້ຂຶ້ນທະບຽນ, ຜູ້ທີ່ໄດ້ຄອບຄອງຊັບ ຫຼື ຄວບຄຸມສິດຄ້ຳປະກັນກ່ອນເຈົ້າໜີ້ອື່ນ ຜູ້ນັ້ນຈະໄດ້ບຸລິມະສິດ.

ບັນດາເຈົ້າໜີ້ທີ່ມີການຄ້ຳປະກັນແຕ່ບໍ່ໄດ້ຈົດທະບຽນການຄ້ຳປະກັນ, ບໍ່ໄດ້ຄອບຄອງຊັບ ແລະ ບໍ່ໄດ້ຄວບຄຸມສິດຄ້ຳປະກັນດ້ວຍຊັບ ໃຫ້ສະເລ່ຍຕາມມູນຄ່າຂອງໜີ້ສິນຂອງເຈົ້າໜີ້ແຕ່ລະຄົນກັບຊັບສິນທັງໝົດຂອງລູກໜີ້.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນເຖິງລຳດັບບຸລິມະສິດຂອງການຄ້ຳປະກັນຕາມສັນຍາ.

	1. ໃນວັນທີ 5 ມັງກອນ 2017 **ກ** ເອົາລົດເກັງ ທະບຽນ ກກ 0000 (ມູນຄ່າ 150.000.000ກີບ) ໄປຈຳນຳກັບ**ຂ**ເພື່ອກູ້ຢືມເງິນ ຈຳນວນ70.000.000ກີບ ໂດຍເອົາລົດໄປຈຳນຳພາຍໃນກຳນົດ ໜຶ່ງປີ, ຕໍ່ມາ ໃນວັນທີ 20 ມັງກອນ 2017 **ກ** ມີຄວາມຕ້ອງການເງິນ ຈຶ່ງເອົາທະບຽນລົດເກັງ ກກ 0000 ໄປຈົດທະບຽນການຈຳນອງເພື່ອກູ້ຢືມເງິນ ຈຳນວນ 70.000.000 ກີບ ນຳ ບໍລິສັດ **ຄ** ອີກ (ສັນຍາກຳນົດໜຶ່ງປີ)ເມື່ອຮອດກຳນົດເວລາ **ກ** ບໍມີເງິນໃຊ້ແທນໜີ້ສິນ ໃຜມີສິດໄດ້ຮັບການໃຊ້ແທນກ່ອນລະຫວ່າງ **ຂ** ແລະ ບໍລິສັດ **ຄ**? ຊຶ່ງອີງຕາມຂໍ້1 ຂອງການກຳນົດບຸລິມະສິດແລ້ວ ໄດ້ມີການຈົດທະບຽນການຈຳນອງກັບບໍລິສັດຄດັ່ງນັ້ນຄແມ່ນເປັນຜູ້ໄດ້ຮັບບຸລິມະສິດໃນການໃຊ້ແທນກ່ອນ ເພາະຖືເອົາການຈົດທະບຽນການຈຳນອງເປັນອັນສຳຄັນໃນການກຳນົດບຸລະມະສິດ. **2. ກ** ໄດ້ກູ້ຢືມເງິນ ຈຳນວນ 100.000.000ກີບ ໂດຍໄດ້ເອົາໜັງສືຢັ້ງຢືນກຳມະສິດໃນທີດິນ ເລກທີ 55/ນວ ຊຶ່ງມີມູນຄ່າ ຈຳນວນ 400.000.000ກີບ ມາຈົດທະບຽນການຈຳນອງດ້ວຍການກູ້ຢືມເງິນ ຄັ້ງວັນທີ 15 ມັງກອນ 2017 ນຳ ບໍລິສັດ **ຂ**. **ກ** ໄດ້ເອົາໃບຢັ້ງຢືນກຳມະສິດທີ່ດິນ ເລກທີ 55/ນວ ມາຈົດທະບຽນການຈຳນອງ ໃນວັນທີ 2 ທັນວາ 2016 ເພື່ອກູ້ຢືມເງິນຈຳນວນ 120.000.000 ກີບ ກັບ ບໍລິສັດ **ຂ**. **ກ** ໄດ້ເອົາໃບຢັ້ງຢືນກຳມະສິດທີ່ດິນ ເລກທີ 55/ນວ ມາຈົດທະບຽນການຈຳນອງ ໃນວັນທີ 2 ມັງກອນ 2017 ເພື່ອກູ້ຢືມເງິນຈຳນວນ 130.000.000 ກີບ ກັບບໍລິສັດ **ຄ**ເຖິງກຳນົດເວລາການໃຊ້ແທນໜີ້ສິນ ແຕ່ລູກໜີ້ **ກ** ບໍສາມາດ ໃຊ້ແທນໜີ້ສິນໄດ້ ດັ່ງນັ້ນບຸລິມະສິດໃນການໃຊ້ແທນໜີ້ສິນແມ່ນອີງ ຕາມຂໍ້ 2 ຄື ເຈົ້າໜີ້ໃດທີ່ຈົດທະບຽນການຈຳນອງກ່ອນແມ່ນມີສິດກ່ອນ ຄື ເຈົ້າໜີ້ບໍລິສັດ **ຂ** ເປັນຜູ້ໄດ້ຮັບບຸລິມະສິດໃນການໃຊ້ແທນໜີ້ສິນກ່ອນເຈົ້າໜີ້ອື່ນ **3.** ໃນວັນທີ 20 ມັງກອນ 2017 **ກ** ເອົາວັດຖຸມີຄ່າຄືຄຳ (ມູນຄ່າຫ້າສິລ້ານ) ໄປຈຳນຳ ກັບ **ຂ** ເພື່ອກູ້ຢືມເງິນຈຳນວນ 20.000.000 ກີບ ໂດຍເອົາຄຳໄປ ເປັນຫຼັກຊັບຄ້ຳປະກັນພາຍໃນກຳນົດໜຶ່ງປີ, ຕໍ່ມາໃນວັນທີ 28 ມັງກອນ 2017 **ກ** ມີຄວາມຕ້ອງການເງິນ ຈຶ່ງໄດ້ໃຫ້ຄຳໜັ້ນສັນຍາວ່າຈະເອົາວັດຖຸມີຄ່າຄືຄຳ ໄປ ຈຳນຳ(ແຕ່ໃນຕົວຈິງບໍໄດ້ເອົາໄປແທ້ ເພາະຄຳນັ້ນເອົາໄປຈຳນຳນຳ **ຂ** ແລ້ວ)ເພື່ອ ກູ້ຢືມເງິນ ຈຳນວນ 50.000.000 ກີບ ນຳ **ຄ** ອີກ (ສັນຍາກຳນົດໜຶ່ງປີ) ເມື່ອ ຮອດກຳນົດເວລາ **ກ** ບໍມີເງິນໃຊ້ແທນໜີ້ສິນ ໃຜມີສິດໄດ້ຮັບການໃຊ້ແທນກ່ອນ ລະຫວ່າງ **ຂ** ແລະ ບໍລິສັດ **ຄ**? ຊຶ່ງອີງຕາມຂໍ້3 ຂອງການກຳນົດບຸລິມະສິດແລ້ວ **ຂ** ເປັນຜູ້ຄອບຄອງຊັບ ດັ່ງນັ້ນ **ຂ** ແມ່ນເປັນຜູ້ໄດ້ຮັບບຸລິມະສິດກ່ອນໃນການ ໃຊ້ແທນກ່ອນ ອາດຈະແມ່ນຈາກການປະມູນຂາຍຄຳ ຫຼື ອາດເສັງເອົາຕາມ ລາຄາສະພາບຂອງຄຳໃນລາຄາປັດຈຸບັນນັ້ນ. ເຫດຜົນທີ່ວ່າ "**ຂ**" ມີບູລິມະສິດ ກວ່າ"**ຄ**" ເປັນຍ້ອນວ່າ"**ຂ**" ໄດ້ຄອບຄອງຊັບຄ້ຳປະກັນເຊິ່ງ"**ຄ**" ນັ້ນບໍ່ໄດ້ມີການ ຈົດທະບຽນຄ້ຳປະກັນແຕ່ຢ່າງໃດ ແລະ ບໍ່ໄດ້ຄອບຄອງຊັບນັ້ນ. **4.**ໃນວັນທີ 10 ມັງກອນ 2016 **ກ** ເອົາໃບຢັ້ງຢືນກຳມະສິດດິນນາ ເລກ ທີ 77/ນວ ມູນຄ່າ ຈຳນວ 500.000.000 ກີບ ມາເຮັດຈຳນອງ ກັບ **ຂ** ເພື່ອ ກູ້ຢືມເງິນ ຈຳນວນ 200.000.000 ກີບ ໃນການຈຳນອງແຕ່ລະຄັ້ງນັ້ນແມ່ນບໍ່ ໄດ້ໄປຈົດທະບຽນການຄ້ຳປະກັນການຈຳນອງກັບຂະແໜງການຄຸ້ມຄອງທີ່ດິນ ແຕ່ລາວໄດ້ເຮັດໜັງສືສັນຍາໂດຍໄດ້ຈົດ ແລະ ຂຽນບອກລະອຽດ ຢ່າງຈະແຈ້ງ ວ່າຊັບນັ້ນຕັ້ງຢູ່ໃສ ເລກທີ່ໃດ ເນື້ອທີ (ແຕ່ບໍໄດ້ເອົາເອກະສານຢັ້ງຢືນກຳມະສິດ ໃຫ້ເຈົ້າໜີ້ເກັບໄວ້) ແລະ ການເຮັດສັນຍາແຕ່ລະຄັ້ງກໍມີພະຍານຮັບຮູ້ນຳ ແລະ ສຳຄັນແມ່ນໄດ້ຮັບຄວາມເຫັນດີຈາກເຈົ້າໜີ້ແຕ່ລະຄົນທີ່ໃຫ້ການກູ້ຢືມ ດັ່ງນີ້:

	ວັນທີ 25 ມັງກອນ 2016 **ກ** ເອົາເອກະສານຢັ້ງຢືນກຳມະສິດດິນນາ ເລກ ທີ 77/ນອ ມາຈຳນອງກັບ **ຄ** ເພື່ອກູ້ຍືມເງິນ ຈຳນວນ 200.000.000ກີບ ໃນວັນທີ 20 ກຸມພາ 2016**ກ** ເອົາເອກະສານຢັ້ງຢືນກຳມະສິດດິນນາ ເລກ ທີ 77/ນອ ມາຈຳນອງ ກັບ **ງ** ເພື່ອກູ້ຍືມເງິນ ຈຳນວນ 500.000.000ກີບ**ຂ, ຄ**ແລະ**ງ**ໄດ້ຮັບເງິນຢ່າງເທົ່າທຽມກັນຕາມຈຳນວນຂອງການຮຽກຮ້ອງ. ໃນກໍລະນີເຖິງກຳນົດເວລາໃນການໃຊ້ແທນໜີ້ສິນຫຼືການປະຕິບັດສິດແລະພັນທະຕາມທີ່ໄດ້ຕົກລົງກັນໄວ້ໃນສັນຍາແລ້ວ, ໃນກໍລະນີກຳນົດເວລາຂອງການປະຕິບັດສັນຍາຫາກສິ້ນສຸດລົງ ແຕ່ລູກໜີ້ບໍມີເງິນເພື່ອມາໃຊ້ແທນ ດັ່ງນັ້ນການໃຊ້ແທນໜີ້ສິນແມ່ນອີງຕາມທີ່ໄດ້ກຳນົດໄວ້ໃນວັກສອງຂອງມາດຕານີ້ນັ້ນ ແມ່ນຕ້ອງໄດ້ເອົາດິນທີ່ເປັນຫຼັກຊັບໃນການຄ້ຳປະກັນນັ້ນ ມາປະມູນຂາຍຕີມູນຄ່າການຊື້ຂາຍຕາມລາຄາທ້ອງຕະຫຼາດ ເມື່ອຂາຍໄດ້ແລ້ວແມ່ນຕ້ອງໃຊ້ແທນໜີ້ສິນຕາມມູນຄ່າການກູ້ຍືມ ຕາມສັນຍາທີ່ໄດ້ຕົກລົງກັນ ຖ້າຫາກເຫຼືອແມ່ນສົ່ງລູກໜີ້ ແຕ່ຖ້າບໍພໍແມ່ນໃຫ້ລູກໜີ້ຫາມາຕື່ມໃຊ້ແທນຈົນຄົບຕາມໜີ້ທີ່ຕົນໄດ້ກູ້ຍືມນັ້ນ. ແຕ່ໃນຕົວຢ່າງນັ້ນ ແມ່ນມີ ສາມເຈົ້າໜີ້ ແລະ ມູນຄ່າຂອງການກູ້ຍືມແມ່ນຫ້າຮ້ອຍຫ້າສິບລ້ານ ເກີນຊັບຄ້ຳປະກັນ ເພາະຊັບຄ້ຳປະກັນຕີມູນຄ່າໄດ້ພຽງແຕ່ຫ້າຮ້ອຍລ້ານ ດັ່ງນັ້ນ ເພື່ອປະຕິບັດຕາມວັກສອງຂອງມາດຕານີ້ແມ່ນປະຕິບັດຕາມອັດຕາສ່ວນໜີ້ສິນຂອງສັນຍາ ເຊັ່ນ: **ຂ** ຜູ້ເປັນເຈົ້າໜີ້ທີ່ໜຶ່ງ ຂອງເງິນຈຳນວນສອງຮ້ອຍລ້ານ (ກີບ) ແມ່ນສາມາດໄດ້ຮັບ: ຫ້າຮ້ອຍລ້ານx ສອງຮ້ອຍລ້ານ / (ສອງຮ້ອຍລ້ານ + ສອງຮ້ອຍລ້ານ + ຮ້ອຍຫ້າສິບລ້ານ) = ປະມານຮ້ອຍແປດສິບເອັດລ້ານແປດແສນ (ກີບ). **ຄ**ຜູ້ເປັນເຈົ້າໜີ້ທີສອງຂອງເງິນຈຳນວນສອງຮ້ອຍລ້ານ (ກີບ) ແມ່ນສາມາດໄດ້ຮັບ: ຫ້າຮ້ອຍລ້ານx ສອງຮ້ອຍລ້ານ / (ສອງຮ້ອຍລ້ານ + ສອງຮ້ອຍລ້ານ + ຮ້ອຍຫ້າສິບລ້ານ) = ປະມານຮ້ອຍແປດສິບເອັດລ້ານຫ້າແສນ (ກີບ). **ງ** ຜູ້ເປັນເຈົ້າໜີ້ທີສາມຂອງເງິນຈຳນວນຮ້ອຍຫ້າສິບລ້ານ (ກີບ) ແມ່ນສາມາດໄດ້ຮັບປະມານຮ້ອຍສາມສິບຫົກລ້ານສີ່ແສນ (ກີບ).
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງໃໝ່ຍ້ອນວ່າ ກຳນົດບຸລິມະສິດແຕ່ຍັງມີລັກສະນະບໍຊັດເຈນ ແລະ ເຂົ້າໃຈຍາກໃນການຈັດຕັ້ງປະຕິບັດ ເນື່ອງຈາກວ່າ ການກຳນົດບຸລິມະສິດແມ່ນມີຄວາມສຳຄັນຫຼາຍ ໃນການປົກປ້ອງ ເຈົ້າໜີ້ ໃຫ້ໄດ້ຮັບຄວາມເປັນທຳໃນການຊຳລະສະສາງ ແລະ ເພື່ອການແກ້ໄຂບັນການການໄຊແທນໜີ້ສິນໄດ້ຮັບການຈັດຕັ້ງປະຕິບັດງ່າຍຂຶ້ນ ດັ່ງນັ້ນການປັບປຸງຄືນມາດຕາດັ່ງກ່າວຈຶ່ງມີຄວາມຈຳເປັນຫຼາຍ ການກຳນົດມາດຕາດັ່ງກ່າວແມ່ນອີງໃສ່ການປະຕິບັດຕົວຈິງໃນສັງຄົມປັດຈຸບັນ ກໍຄືການຄອບຄອງຊັບຂອງເຈົ້າໜີ້ ສະນັ້ນ ການກຳນົດບຸລິມະສິດໃນກໍລະນີຂອງການຄອບຄອງຊັບ ແລະ ໃນເວລາດຽວກັນກໍມີການຄວບຄຸມສິດໃນຊັບຂອງເຈົ້າໜີ້ເຊັ່ນກັນແຕ່ອາດມີຄວາມແຕກຕ່າງກັນທາງດ້ານເວລາໃນການຈຳນອງຫຼື ການຈຳນຳ ສະນັ້ນໂດຍອີງໃສ່ເຫດການດັ່ງກ່າວ ຈຶ່ງໄດ້ມີການກຳນົດໃນຂໍ້ (1) ຂອງມາດຕາດັ່ງກ່າວຂຶ້ນ. ການແບ່ງປັນໜີ້ສິນຕາມອັນຕາສ່ວນໃນກໍລະນີບໍຄອບຄອງ ແລະບໍໄດ້ຄວບຄຸມສິດໃນການຈຳນຳ ຫຼື ຈຳນອງ ກໍເປັນເຫດຜົນ ແລະ ມາດຕະການໜຶ່ງທີ່ສະດວກ ແລະ ງ່າຍດາຍໃນການກຳນົດການໃຊ້ແທນໜີ້ສິນເພື່ອຮັບປະກັນໃຫ້ເຈົ້າໜີ້ໄດ້ຮັບການປົກປ້ອງຕາມບໍລິມາດ ແລະ ອັດຕາສ່ວນໃນໜີ້ສິນຂອງຕົນເອງ. ອີກເຫດຜົນກໍຄື ການຈົດທະບຽນການຄ້ຳປະກັນໜີ້ສິນໃນການຈຳນອງ ແລະ ການຈຳນຳ ກໍເປັນພື້ນຖານໜຶ່ງໃຫ້ແກ່ການປົກປ້ອງຜົນປະ�โຫຍດຊັບຂອງຜູ້ຄ້ຳປະກັນເອງ ແລະ ເຮັດໃຫ້ເຈົ້າຂອງຊັບສາມາດ ແລະ ມີສິດໃນການນຳເອົາຊັບສິນ

	ຂອງຕົນທີ່ມີມູນຄ່າສູງກວ່າໜີ້ສິນ ສາມາດໄປຄ້ຳປະກັນໜີ້ສິນອື່ນໆ ຫຼື ຫຼາຍໆ ໜີ້ສິນໄດ້ອີກລະບົບການຈົດທະບຽນການຄ້ຳປະກັນກໍເປັນລະບົບໜຶ່ງທີ່ຈຳເປັນ ແລະ ປົກປ້ອງໃຫ້ສັນຍາໄດ້ຮັບການຈັດຕັ້ງປະຕິບັດ ແລະ ແກ້ໄຂໄປຕາມກົນໄກມາດຕະການທີ່ວາງໄວ້.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 325 ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2005. ມາດຕາ 308 ຂອງປະມວນກົດໝາຍແພ່ງຫວຽດນາມປີ2015.
ມາດຕາອ້າງອີງ	ມາດຕາ 524, 530, 531, 550 ແລະ 562 ຂອງປະມວນກົດໝາຍແພ່ງ.
ປະເພນີສານ ແລະ ອື່ນໆ	ສືບຕໍ່ຄົ້ນຄວ້າ

ມາດຕາ 525 ຮູບແບບການຄ້ຳປະກັນຕາມສັນຍາ

ການຄ້ຳປະກັນຕາມສັນຍາມີ ສາມ ຮູບແບບ ດັ່ງນີ້:

1. ການຈຳນຳ;
2. ການຈຳນອງ;
3. ການຄ້ຳປະກັນດ້ວຍບຸກຄົນ ຫຼື ນິຕິບຸກຄົນອື່ນ.

ຈຸດປະສົງ	ເພື່ອໄຈ້ແຍກໃຫ້ເຫັນເຖິງປະເພດ ຫຼື ຮູບແບບທີ່ຈະນຳມາຄ້ຳປະກັນຕາມທີ່ໄດ້ຕົກລົງກັນໄວ້ໃນສັນຍາ.
ຕົວຢ່າງ	**1.** ການຈຳນຳ **ສ** ກູ້ຢືມເງິນ ຈຳນວນ 2.000.000ກີບ ໂດຍເອົາສາຍຄໍຄຳສອງບາດ ໄປໄວ້ໃນການຄອບຄອງຂອງເຈົ້າໜີ້; **2. ກ** ກູ້ຢືມເງິນນຳ **ຄ** ຈຳນວນ 200.000.000ກີບ ໂດຍເອົາໃບຢັ້ງຢືນກຳມະສິດທີ່ດິນ ແລະ ເຮືອນ ໄປຈຳນອງ ໂດຍມີການຈົດທະບຽນການຄ້ຳປະກັນ (ການຈຳນອງ)ນຳພາກສ່ວນທີ່ກ່ຽວຂ້ອງ; **3.ສ** ກູ້ຢືມເງິນນຳທະນາຄານ **ຍ** ຈຳນວນ 10.000.000ກີບ ໂດຍໃຫ້ຫົວໜ້າ **ຊ** ເປັນບຸກຄົນເຊັນຮັບປະກັນການກູ້ຢືມຄ້ຳປະກັນນັ້ນ ກໍລະນີນີ້, **ຊ** ຊຶ່ງເປັນຜູ້ທີ່ໄດ້ຖືກ **ສ** ຂໍໃຫ້ເຊັນຮັບປະກັນເປັນຜູ້ຄ້ຳປະກັນໃຫ້ຈະກາຍເປັນຜູ້ເຮັດສັນຍາຄ້ຳປະກັນກັບທະນາຄານ **ຍ**.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກມາດຕາ 8 ຂອງກົດໝາຍວ່າດ້ວຍການຄ້ຳປະກັນການປະຕິບັດສັນຍາ ປີ 2005 ຊຶ່ງປັບປຸງຈາກການຄ້ຳປະກັນດ້ວຍສັງຫາຣິມະຊັບ ແລະ ອະສັງຫາຣິມະຊັບມາເປັນ ການຈຳນຳ ແລະ ການຈຳນອງ ຊຶ່ງໃນສອງຮູບການນີ້ ແມ່ນສາມາດເຮັດໄດ້ທັງສັງຫາຣິມະຊັບ ແລະ ອະສັງຫາຣິມະຊັບ ແຕ່ຈະມີຄວາມຊັດເຈນໃນເງື່ອນໄຂ ແລະ ຜົນຂອງການຈຳນຳ ແລະ ຈຳນອງ ແຕກຕ່າງກັນໄປຕາມການກຳນົດໃນປະມວນກົດໝາຍແພ່ງ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ກ. ການຈຳນຳ

ມາດຕາ 526 ການຈຳນຳ

ການຈຳນຳ ແມ່ນການຮັບປະກັນການໃຊ້ແທນໜີ້ສິນ ຫຼື ການປະຕິບັດພັນທະອື່ນແກ່ເຈົ້າໜີ້ ດ້ວຍການເອົາຊັບຄ້ຳປະກັນ ໄປໄວ້ນຳ ຫຼື ຢູ່ໃນການຄອບຄອງ ຂອງຜູ້ຮັບຈຳນຳ ຫຼື ບຸກຄົນອື່ນ ຕາມການຕົກລົງ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນນິຍາມຂອງການຈຳນຳຊຶ່ງຈຸດພິເສດຂອງການຈຳນຳຄືການຍ້າຍການຄອບຄອງຊັບທີ່ເປັນເປົ້າໝາຍໄປຢູ່ນຳເຈົ້າໜີ້ ຫຼື ບຸກຄົນອື່ນຕາມການລົງກັນ
ຕົວຢ່າງ	**ກ** ກູ້ຍືມເງິນຈາກ **ຂ** ຈຳນວນ 2.000.000 ກີບ **ກ** ໄດ້ເອົາສາຍຄໍຄຳໜັກ 2 ບາດ ທີ່ເປັນກຳມະສິດຂອງຕົນມາຈຳນຳກັບ **ຂ** ແລະ ໄດ້ມອບໃຫ້**ຂ**ເກັບຮັກສາໄວ້ນອກນັ້ນ, ສຳລັບຕົວຢ່າງກ່ຽວກັບການຈຳນຳແມ່ນໃຫ້ເບິ່ງມາດຕາ 529, 535 ແລະ 540.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 10, 11 ແລະ 12 ຂອງກົດໝາຍວ່າດ້ວຍການຄ້ຳປະກັນການປະຕິບັດສັນຍາ ປີ 2005, ມາດຕາ 2 ຂອງດຳລັດວ່າດ້ວຍການຊອດຈຳການກຳນົດມາດຕານີ້ແມ່ນມີຄວາມສຳຄັນຫຼາຍໃນການປັບລະບົບການຄ້ຳປະກັນດ້ວຍສັງຫາຣິມະຊັບ (ເພາະຕາມກົດໝາຍປັດຈຸບັນເອີ້ນວ່າແມ່ນ ການຊອດຈຳ ແຕ່ປ່ຽນຊື່ມາເປັນການຈຳນຳເນື່ອງຈາກວ່າເພື່ອໃຫ້ງ່າຍໃນການນຳໃຊ້ຄຳສັບ ແລະ ບໍ່ໃຫ້ສັບປົນກັນ ຫຼື ມີຄວາມເຂົ້າໃຈຜິດໃນການນຳໃຊ້ຄຳສັບນັ້ນ) ຊຶ່ງໃນຫຼັກການໃໝ່ຂອງການຈຳນຳນີ້ ໄດ້ອີງໃສ່ບົດຮຽນການຄົ້ນຄ້ວາ ແລະ ການກຳນົດໃນຫຼາຍໆປະມວນກົດໝາຍຂອງສາກົນ ຫຼື ບັນດາປະເທດຕ່າງໆ ໂດຍສະເພາະໃນຫຼັກຂອງການຈຳນຳແລ້ວບໍ່ສະເພາະແຕ່ຊັບທີ່ເປັນ ສັງຫາຣິມະຊັບເທົ່ານັ້ນທີ່ສາມາດໄວ້ໃນການຄອບຄອງຂອງເຈົ້າໜີ້ໄດ້ ແຕ່ໃນຫຼັກທົ່ວໄປແລ້ວ ຊັບທີ່ເປັນອະສັງຫາຣິມະຊັບກໍສາມາດເອົາໄວ້ໃນການຄອບຄອງຂອງເຈົ້າໜີ້ເຊັນກັນໂດຍມີວິທີ ແລະ ຜົນຂອງການຈັດຕັ້ງປະຕິບັດທີ່ກຳນົດແຕກຕ່າງກັນ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 309 ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2005; ມາດຕາ 342 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ; ມາດຕາ 816 ຂອງປະມວນກົດໝາຍແພ່ງກຳປູເຈຍ.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 527 ປະເພດຂອງການຈຳນຳ

ການຈຳນຳມີ ສາມ ປະເພດຕົ້ນຕໍ ດັ່ງນີ້:

1. ການຈຳນຳດ້ວຍສັງຫາລິມະຊັບ;
2. ການຈຳນຳດ້ວຍອະສັງຫາລິມະຊັບ;
3. ການຈຳນຳດ້ວຍສິດ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນກ່ຽວກັບປະເພດຂອງການຈຳນຳໂດຍການຈຳນຳແມ່ນມີ3ປະເພດອີງຕາມຊັບທີ່ເປັນເປົ້າໝາຍ.
ຕົວຢ່າງ	**1.** ສັງຫາຣິມະຊັບທີ່ສາມາດນຳມາເປັນຫຼັກຊັບຈຳນຳ(ຄ້ຳປະກັນ)ໃນການປະຕິບັດສັນຍາເຊັ່ນ ລົດ, ເຮືອ, ສັດ, ເຄື່ອງເຟີນິເຈີ້..... **2.** ອະສັງຫາຣິມະຊັບທີ່ສາມາດມາເປັນຫຼັກຊັບໃນການຈຳນຳ(ຄ້ຳປະກັນ)ການປະຕິບັດສັນຍາ ຫຼື ການໃຊ້ແທນໜີ້ສິນ ເຊັ່ນ ທີ່ດິນ, ເຮືອນ, ຕຶກ, ອາຄານຕ່າງໆ **3.** ສິດຕ່າງໆທີ່ສາມາດນຳເອົາມາເປັນຫຼັກຊັບໃນການຈຳນຳ (ຄ້ຳປະກັນ)ການປະຕິບັດສັນຍາເຊັ່ນ: ສິດທວງ ແລະ ສິດອື່ນທີ່ບໍ່ແມ່ນສິດທວງ ຊຶ່ງອາດປະກອບດ້ວຍໃບຮຸ້ນ,ໃບຮຸ້ນກູ້,ພັນທະບັດ,ບັນຊີເງິນຝາກທະນາຄານ,ໝາກຜົນຂອງໂຄງການໃດໜຶ່ງທີ່ແນ່ນອນອາດຈະເກີດຂຶ້ນໃນອະນາຄົດ.....

ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 11 ຂອງດຳລັດວ່າດ້ວຍການຊອດຈຳໃນກົດໝາຍປັດຈຸບັນການຈັດປະເພດຊັບໃນການຈຳນຳ (ຄ້ຳປະກັນ) ການປະຕິບັດສັນຍາແມ່ນມີລັກສະນະລວມກັນສັບສົນ ແລະ ບໍ່ເຂົ້າໃຈເທົ່າທີ່ຄວນດັ່ງນັ້ນ, ໃນການກຳນົດມາດຕາໃໝ່ນີ້ ແມ່ນແຍກໃຫ້ເຫັນເຖິງການຈັດແບ່ງປະເພດຂອງການຈຳນຳ ຊຶ່ງສາມາດແບ່ງໃຫ້ເຫັນ ສາມລັກສະນະ ທີ່ມີຮູບແບບ ວິທີການ, ເງື່ອນໄຂ ແລະ ຜົນ ຂອງແຕ່ລະປະເພດແຕກຕ່າງກັນຂອງຊັບ ທີ່ເປັນສັງຫາຣິມະຊັບ, ອະສັງຫາຣິມະຊັບ ແລະ ຊັບທີ່ບໍ່ມີຕົວຕົນ ເຊັນ ການຈຳນຳດ້ວຍສິດທວງ ແລະ ສິດອື່ນ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງຕ່າງປະເທດ	ສືບຕໍ່ຄົ້ນຄ້ວາ.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ກ1. ການຈຳນຳດ້ວຍສັງຫາລິມະຊັບ

ມາດຕາ 528 ການຈຳນຳດ້ວຍສັງຫາລິມະຊັບ

ການຈຳນຳດ້ວຍສັງຫາລິມະຊັບ ແມ່ນການຮັບປະກັນການໃຊ້ແທນໜີ້ສິນ ຫຼື ການປະຕິບັດພັນທະດ້ວຍສັງຫາລິມະຊັບຊຶ່ງຜູ້ຈຳນຳໄດ້ນຳເອົາສັງຫາລິມະຊັບໄປໄວ້ໃນການຄອບຄອງຂອງຜູ້ຮັບຈຳນຳຫຼືບຸກຄົນອື່ນ ຕາມການຕົກລົງ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນກ່ຽວກັບນິຍາມຂອງການຈຳນຳດ້ວຍສັງຫາລິມຊັບ.
ຕົວຢ່າງ	**ກ** ກູ້ຢືມເງິນຈາກ **ຂ** ຈຳນວນ 2.000.000ກີບ **ກ** ໄດ້ເອົາສາຍຄໍຄຳນ້ຳໜັກ 2 ບາດທີ່ເປັນກຳມະສິດຂອງຕົນມາຈຳນຳກັບ **ຂ** ແລະ ໄດ້ມອບໃຫ້ **ຂ** ເກັບຮັກສາໄວ້.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 12 ຂອງກົດໝາຍວ່າດ້ວຍການຄ້ຳປະກັນການປະຕິບັດສັນຍາ ປີ 2005 ປັບປຸງຄຳສັບຊອດຈຳມາເປັນການຈຳນຳ ເພື່ອເຂົ້າໃຈງ່າຍ ນຳໃຊ້ງ່າຍ ແລະ ໃຈ້ແຍກຊັບທີ່ນຳມາຄ້ຳປະກັນໄດ້ງ່າຍ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 829 ຂອງປະມວນກົດໝາຍແພ່ງກຳປູເຈຍ.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 529 ເງື່ອນໄຂຂອງການຈຳນຳດ້ວຍສັງຫາລິມະຊັບ

ການຈຳນຳດ້ວຍສັງຫາລິມະຊັບ ປະກອບດ້ວຍເງື່ອນໄຂ ດັ່ງນີ້:

1. ມີສັນຍາໃຊ້ແທນໜີ້ສິນ ຫຼື ການປະຕິບັດພັນທະ;
2. ມີການຕົກລົງຈຳນຳ;
3. ຊັບທີ່ນຳມາຈຳນຳເປັນກຳມະສິດຂອງຜູ້ຈຳນຳຫຼືເປັນຊັບຂອງບຸກຄົນອື່ນແຕ່ມີການມອບສິດ;
4. ນຳເອົາສັງຫາລິມະຊັບໄປໄວ້ໃນການຄອບຄອງຂອງຜູ້ຮັບຈຳນຳຫຼືບຸກຄົນອື່ນຕາມການຕົກລົງ.

ຈຸດປະສົງ	ເພື່ອກຳນົດໃຫ້ຄູ່ສັນຍາສາມາດເຂົ້າໃຈ ແລະ ກ່ຽວກັບເງື່ອນໄຂເພື່ອເຮັດການຈຳນຳດ້ວຍສັງຫາຣິມະຊັບ ຕ້ອງໄດ້ກຽມພ້ອມຫຍັງແດ່ ຊຶ່ງເປັນສິ່ງທີ່ຈຳເປັນ ແລະ ຂາດບໍ່ໄດ້.

ຕົວຢ່າງ	**1. ກ** ກູ້ຢືມເງິນ ຈຳນວນ 2.000.000 ກີບ ນຳ **ຂ** ໂດຍເອົາລົດຈັກ ໄປໄວ້ໃນການຄອບຄອງຂອງເຈົ້າໜີ້ **ຂ** ເພື່ອເປັນຫຼັກຊັບໃນການຄ້ຳປະກັນການຈຳນຳໃນການກູ້ຢືມນີ້ຕ້ອງມີສັນຍາກູ້ຢືມ ຫຼື ສັນຍາການໃຊ້ແທນໜີ້ສິນ ຊຶ່ງໂດຍຮັບປະກັນດ້ວຍສັງຫາຣິມະຊັບທີ່ນຳມາຈຳນຳນັ້ນ; **2.** ລົດຈັກທີ່ນຳມາຈຳນຳນັ້ນ ຕ້ອງເປັນກຳມະສິດຂອງ **ກ** ໝາຍວ່າ **ກ** ເປັນເຈົ້າຂອງລົດແທ້ ແລະ ອອກຊື່ລາວແທ້; **3.** ລົດທີ່ **ກ** ນຳໄປຈຳນຳນັ້ນ ຕ້ອງແມ່ນໄດ້ເອົາໄປໄວ້ໃນການຄອບຄອງ ຫຼື ເອົາໄປໃຫ້ເຈົ້າໜີ້ໄວ້ ສ່ວນວ່າເຈົ້າໜີ້ຈະສາມາດນຳໃຊ້ໄດ້ ຫຼື ບໍນັ້ນ ແມ່ນແລ້ວແຕ່ການຕົກລົງເຫັນດີກັນລະຫວ່າງ **ກ** ແລະ **ຂ**.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກມາດຕາ 13 ຂອງກົດໝາຍວ່າດ້ວຍການຄ້ຳປະກັນການປະຕິບັດສັນຍາ ປີ 2005 ເພື່ອໃຫ້ເຂົ້າໃຈງ່າຍໂດຍໄດ້ປັບຄຳວ່າ ວັດຖຸສິ່ງຂອງ ເປັນສັງຫາລິມະຊັບ ເພື່ອໃຫ້ເປັນຄຳສັບລວມ ແລະ ສາມາດນຳໃຊ້ກັບຊັບເຄື່ອນທີ່ທຸກປະເພດໄດ້ ແລະ ໃຫ້ສອດຄ່ອງກັບເນື້ອໃນຂອງມາດຕາ 227.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 526, 528, 530 ແລະ 531 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 530 ຜົນຂອງການຈຳນຳດ້ວຍສັງຫາລິມະຊັບ

ສັງຫາລິມະຊັບທີ່ນຳໄປຈຳນຳນັ້ນ ຍັງເປັນກຳມະສິດຂອງຜູ້ຈຳນຳຢູ່ ແຕ່ຢູ່ໃນການຄອບຄອງຂອງຜູ້ຮັບຈຳນຳ ຫຼື ຂອງບຸກຄົນອື່ນ ຕາມການຕົກລົງ. ຜູ້ຮັບຈຳນຳມີບຸລິມະສິດຕໍ່ສັງຫາລິມະຊັບ ທີ່ນຳມາຈຳນຳກ່ອນເຈົ້າໜີ້ຄົນອື່ນແຕ່ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນມາດຕາ 524 ຂອງປະມວນກົດໝາຍສະບັບນີ້.

ຜູ້ຮັບຈຳນຳ ຫຼື ບຸກຄົນອື່ນນັ້ນ ບໍ່ມີສິດນຳໃຊ້ ຫຼື ຮັບໝາກຜົນຈາກສັງຫາລິມະຊັບດັ່ງກ່າວ, ເວັ້ນເສຍແຕ່ໄດ້ຮັບອະນຸຍາດຢ່າງເປັນລາຍລັກອັກສອນຈາກຜູ້ຈຳນຳ. ຜູ້ຮັບຈຳນຳ ຫຼື ບຸກຄົນອື່ນ ທີ່ໄດ້ຮັບມອບໝາຍໃຫ້ປົກປັກຮັກສາສັງຫາລິມະຊັບນັ້ນ ຕ້ອງຮັບຜິດຊອບໃຊ້ແທນການເປ່ເພ, ເສຍຫາຍຍ້ອນຄວາມຜິດພາດຂອງຕົນ.

ໃນກໍລະນີທີ່ສັງຫາລິມະຊັບ ຊຶ່ງນຳມາຈຳນຳນັ້ນ ຫາກເປ່ເພ, ເສຍຫາຍ ຫຼື ຖືກລັກ ຜູ້ຮັບຈຳນຳ ຫຼື ບຸກຄົນອື່ນທີ່ໄດ້ຮັບມອບໝາຍໃຫ້ປົກປັກຮັກສາ ມີສິດທວງ, ຕິດຕາມເອົາຊັບນັ້ນຄືນ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນກ່ຽວກັບກໍລະນີທີ່ມີການຈຳນຳແມ່ນພາໃຫ້ເກີດມີຜົນໃນການນຳໃຊ້ລວມທັງສິດ ແລະ ຄວາມຮັບຜິດຊອບຕໍ່ຊັບທີ່ຈຳນຳບຸລິມະສິດຂອງເຈົ້າໜີ້ຜູ້ຮັບຈຳນຳຕໍ່ບັນດາເຈົ້າໜີ້ດ້ວຍກັນເມື່ອມີການແບ່ງປັນເງິນທີ່ໄດ້ຈາກການຂາຍຊັບທີ່ຈຳນຳ.
ຕົວຢ່າງ	**ກ** ກູ້ຢືມເງິນ ຈຳນວນ 2.000.000 ກີບ ກັບ **ຂ** ໂດຍເອົາລົດຈັກ ໄປໄວ້ໃນການຄອບຄອງຂອງເຈົ້າໜີ້ ຄື **ຂ** ເພື່ອເປັນຫຼັກຊັບໃນການຈຳນຳ ແຕ່ວ່າກຳມະສິດແມ່ນຍັງເປັນຂອງ **ກ** ຢູ່ ໝາຍຄວາມວ່າ ລາວຍັງເປັນເຈົ້າຂອງລົດຢູ່, **ຂ** ທີ່ຄອບຄອງລົດໄວ້ນັ້ນແມ່ນບໍ່ມີສິດໃນການນຳໃຊ້ລົດ ຫຼື ຂັບຂີ່ລົດທີ່ຕົນຄອບຄອງຢູ່ນັ້ນ ແຕ່ຢ່າງໃດ ຖ້າຫາກບໍ່ໄດ້ກຳນົດ ຫຼື ໄດ້ຕົກລົງກັບ **ກ** ນອກຈາກນັ້ນ ຜູ້ກ່ຽວຍັງມີພັນທະໃນການປົກປັກຮັກສາ ແລະ ເບິ່ງແຍງບໍ່ໃຫ້ລົດເສຍຫາຍ ຖ້າຫາກມີການເສຍຫາຍຍ້ອນຄວາມຜິດຂອງ **ຂ** ລາວກໍຕ້ອງໄດ້ຮັບຜິດຊອບໃນການໃຊ້ແທນຄ່າເສຍຫາຍໃນກໍລະນີ, ລົດຫາກເສຍມີຄົນລັກແທ້ **ກ** ທີ່ເປັນເຈົ້າຂອງລົດກໍມີສິດໃນການທວງຫາວຊອກຫາການຕິດຕາມດ້ວຍຕົນເອງ ເພື່ອໃຫ້ໄດ້ລົດກັບຄືນມາ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງຈາກມາດຕາ 14 ຂອງກົດໝາຍວ່າດ້ວຍການຄ້ຳປະກັນການປະຕິບັດສັນຍາ ປີ 2005.

ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ສຳລັບມາດຕາ 350 ປະມວນກົດໝາຍແພ່ງຍີ່ປຸ່ນແມ່ນໝູນໃຊ້ມາດຕາ 297 ໝາຍວ່າຜູ້ຮັບຈຳນຳມີສິດໄດ້ຮັບໝາກຜົນຈາກຊັບຈຳນຳພ້ອມທັງມີບຸລິມະສິດເໜືອເຈົ້າໜີ້ຜູ້ອື່ນໃນການເອົາໝາກຜົນນັ້ນມາຊຳລະໜີ້ສິນຕ້ອງຮັບໃຫ້ຕົນແຕ່ການຈະເອົາຊັບຈຳນຳໃຫ້ບຸກຄົນອື່ນເຊົ່າເພື່ອເກັບຄ່າເຊົ່າໂດຍນຳໃຊ້ມາດຕາ 350 ທີ່ໝູນໃຊ້ມາດຕາ 298 ວັກ2ນັ້ນ, ຈະຕ້ອງໄດ້ຮັບການເຫັນດີຈາກຜູ້ເຮັດຈຳນຳສາກ່ອນແລະ ປະມວນກົດໝາຍແພ່ງຂອງຫວຽດນາມ ປີ 2015 ແມ່ນບໍ່ສາມາດໄດ້ຮັບໝາກຜົນເວັ້ນເສຍແຕ່ໄດ້ຕົກລົງກັນໄວ້ (ມາດຕາ 313 ວັກ 3, ມາດຕາ 314 ວັກ 4.
ມາດຕາອ້າງອີງ	ມາດຕາ 524 ແລະ 531 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 531 ການສົ່ງຄືນ ແລະ ການຂາຍສັງຫາລິມະຊັບ

ເມື່ອລູກໜີ້ ຫາກໄດ້ໃຊ້ແທນໜີ້ສິນ ຫຼື ປະຕິບັດພັນທະໝົດແລ້ວ ການຈຳນຳກໍຈະສິ້ນສຸດລົງ. ສັງຫາລິມະຊັບ ທີ່ນຳມາຈຳນຳນັ້ນ ຕ້ອງສົ່ງຄືນໃຫ້ຜູ້ຈຳນຳ.

ຖ້າລູກໜີ້ຫາກບໍ່ໃຊ້ແທນໜີ້ສິນ ຫຼື ບໍ່ປະຕິບັດພັນທະ ຕາມກຳນົດເວລາທີ່ໄດ້ຕົກລົງກັນ, ສັງຫາລິມະຊັບທີ່ນຳມາຈຳນຳນັ້ນ ຫາກມີມູນຄ່າເທົ່າກັບໜີ້ສິນແລ້ວ ເຈົ້າໜີ້ທີ່ມີບຸລິມະສິດ ກໍມີສິດເອົາຊັບນັ້ນ ເປັນການໃຊ້ແທນໜີ້ສິນ.

ຖ້າສັງຫາລິມະຊັບ ທີ່ນຳມາຈຳນຳນັ້ນຫາກມີມູນຄ່າສູງກວ່າໜີ້ສິນ, ເຈົ້າໜີ້ມີສິດຊື້ເອົາ ແລະ ຕ້ອງຈ່າຍເງິນຄືນຕາມມູນຄ່າທີ່ຍັງເຫຼືອໃຫ້ລູກໜີ້, ຂາຍສັງຫາລິມະຊັບ ທີ່ນຳມາຈຳນຳນັ້ນ ຕາມລາຄາທີ່ໄດ້ຕົກລົງກັນ ຫຼື ປະມູນຂາຍ.ພາຍຫຼັງທີ່ໄດ້ຫັກເອົາຕົ້ນທຶນ ແລະ ດອກເບ້ຍແລ້ວ ສ່ວນທີ່ເຫຼືອຕ້ອງສົ່ງຄືນໃຫ້ຜູ້ຈຳນຳ. ຖ້າຈຳນວນເງິນທີ່ໄດ້ຈາກການຂາຍສັງຫາລິມະຊັບທີ່ນຳມາຈຳນຳນັ້ນ ຫາກບໍ່ພຽງພໍກັບໜີ້ສິນ ແມ່ນໃຫ້ລູກໜີ້ຕື່ມໃສ່ຈົນຄົບຖ້ວນ.

ຜູ້ທີ່ເຫັນດີເອົາສັງຫາລິມະຊັບຂອງຕົນໄປໃຫ້ຈຳນຳ ແລະ ໃຊ້ແທນໜີ້ສິນ ຫຼື ປະຕິບັດພັນທະແທນລູກໜີ້ດ້ວຍຊັບນັ້ນແລ້ວ ມີສິດໄດ້ຮັບການທົດແທນຄືນ ຈາກລູກໜີ້ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 558 ວັກ ທີສີ່ຂອງປະມວນກົດໝາຍສະບັບນີ້.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນຂັ້ນຕອນການນຳໃຊ້ສິດຕໍ່ການຈຳນຳຂອງເຈົ້າໜີ້ເພື່ອເກັບກູ້ໜີ້ (ຕ້ອງຮັບ) ຂອງຕົນໃນກໍລະນີລູກໜີ້ບໍ່ປະຕິບັດພັນທະໜີ້ສິນ.
ຕົວຢ່າງ	**ກ** ກູ້ຍືມເງິນ ຈຳນວນ 2.000.000 ກີບ ນຳ **ຂ** ໂດຍເອົາສາຍຄໍຄຳ ນ້ຳໜັກ 2 ບາດ ໄປໄວ້ໃນການຄອບຄອງຂອງເຈົ້າໜີ້ **ຂ** ເພື່ອເປັນຫຼັກຊັບໃນການຄ້ຳປະກັນການຈຳນຳ ພາຍໃນກຳນົດສາມເດືອນ, ຫຼັງຈາກນັ້ນເວລາຜ່ານໄປໜຶ່ງເດືອນ **ກ** ໄດ້ເອົາເງິນຈຳນວນ 2.000.000 ກີບ ທີ່ຍືມໄປນັ້ນ ມາສົ່ງຄືນໃຫ້ **ຂ** ແລະ **ຂ** ເອງກໍໄດ້ ສົ່ງຄືນສາຍຄໍຄຳນ້ຳໜັກ 2 ບາດ ໃຫ້ **ກ** ໃນສະພາບເດີມ. ໃນກໍລະນີ **ກ** ເມື່ອຮອດກຳນົດເວລາສາມເດືອນແລ້ວແຕ່ ລາວຍັງບໍ່ສາມາດນຳເອົາເງິນສອງລ້ານກີບ ທີ່ຍືມໄປນັ້ນມາສົ່ງຄືນ **ຂ** ແລ້ວ ກໍໃຫ້ປະຕິບັດດັ່ງນີ້: ສາຍຄໍຄຳນ້ຳໜັກ 2 ບາດ ນັ້ນ ຖ້າຫາກມີມູນຄ່າເທົ່າສອງລ້ານກີບ (ການປະເມີນລາຄາແມ່ນຂຶ້ນກັບການກຳນົດໃນແຕ່ລະໄລຍະຂອງລາຄາໃນທ້ອງຕະຫລາດ) ແລ້ວ ແມ່ນໃຫ້ ຂ ເລີຍ, ແຕ່ຖ້າຫາກວ່າ; ສາຍຄໍຄຳນ້ຳໜັກ 2 ບາດ ນັ້ນ ຫາກມີມູນຄ່າສູງກວ່າສອງລ້ານກີບແລ້ວ ແມ່ນຕ້ອງໄດ້ຂາຍຕາມລາຄາໃນທ້ອງຕະຫຼາດໃນປັດຈຸບັນ ຫຼື ການປະເມີນມູນຄ່າແລ້ວ ຫາກ **ຂ** ມີຄວາມຕ້ອງການກໍສາມາດເສັ້ງເອົາ ໂດຍຫັກເອົາຕົ້ນທຶນ ຫຼື ຫັກເອົາໄວ້ສອງລ້ານກີບຕາມໜີ້ສິນ ແລະ ຖ້າຍັງເຫຼືອເທົ່າໃດ ແມ່ນຕ້ອງໄດ້ສົ່ງຄືນແກ່ **ກ** ຫຼື ວ່າ; ເອົາສາຍຄໍຄຳໄປຂາຍໃນທ້ອງຕະຫຼາດ ໄດ້ເງິນມາເທົ່າໃດແລ້ວແມ່ນຕ້ອງໄດ້ຫັກໃຊ້ແທນໜີ້ສິນກ່ອນ ເຊັນ ສອງລ້ານກີບ ຫຼັງຈາກນັ້ນ ຈຶ່ງຕົກເປັນຂອງເຈົ້າຂອງເດີມຄື **ກ** ທັງໝົດ.

ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກມາດຕາ 14 ຂອງກົດໝາຍວ່າດ້ວຍການຄ້ຳປະກັນການປະຕິບັດສັນຍາ ປີ 2005,ການກຳນົດມາດຕານີ້ແມ່ນມີຄວາມສຳຄັນຫຼາຍ ເນື່ອງຈາກວ່າປັດຈຸບັນນີ້ ການໃຊ້ແທນໜີ້ສິນເນື່ງຈາກການບໍ່ປະຕິບັດສັນຍາ ຫຼື ພັນທະຕາມສັນຍາແມ່ນເກີດຂຶ້ນຫຼາຍ ແລະ ອີກຢ່າງໜຶ່ງການກູ້ຢືມເງິນ ທີ່ເກີດຂຶ້ນໂດຍເອົາຊັບໄປຄ້ຳປະກັນ ຫຼື ໄວ້ໃນການຄອບຄອງຂອງເຈົ້າໜີ້ນັ້ນ ສ່ວນໃຫ່ຍເຈົ້າໜີ້ຈະຄຳນຶງແຕ່ວ່າຖ້າບໍ່ໃຊ້ແທນໜີ້ສິນຊັບທີ່ຄອບຄອງນັ້ນແມ່ນຈະຕົກເປັນກຳມະສິດຂອງເຈົ້າໜີ້ ຊຶ່ງຈາກກໍລະນີນີ້ ແມ່ນເຮັດໃຫ້ຄວາມອັບປະໂຫຍດເກີດຂຶ້ນກັບເຈົ້າໜີ້ຫຼາຍ ໂດຍທຽບມູນຄ່າໜີ້ສິນ ກັບຊັບສິນ ທີ່ນຳມາຈຳນຳນັ້ນແມ່ນມີຄວາມແຕກຕ່າງກັນຫຼາຍ ໝາຍຄວາມວ່າ ຊັບທີ່ຈຳນຳແມ່ນມີມູນຄ່າສູງກວ່າໜີ້ສິນຫຼາຍ. ສະນັ້ນການກຳນົດຄືນລະອຽດກ່ຽວກັບມາດຕານີ້ຈຶ່ງເປັນຜົນດີໃຫ້ຄູ່ສັນຍາໃນການແກ້ໄຂຂໍ້ຂັດແຍ່ງທີ່ເກີດຂຶ້ນໃນກໍລະນີບໍ່ສາມາດປະຕິບັດສັນຍາໄດ້ຕາມການຕົກລົງ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 349 ແລະ 354 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 530 ແລະ 558 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 532ການຈຳນຳທີ່ໂຮງຈຳນຳ

ການຈຳນຳທີ່ໂຮງຈຳນຳ ໃຫ້ປະຕິບັດຕາມມາດຕາ 528 ເຖິງ ມາດຕາ 531 ຂອງປະມວນກົດໝາຍສະບັບນີ້ ແລະ ລະບຽບການກ່ຽວກັບໂຮງຈຳນຳ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນກ່ຽວກັບຂໍ້ກຳນົດທາງດ້ານກົດໝາຍທີ່ຈະນຳໃຊ້ສຳລັບການຈຳນຳທີ່ໂຮງຈຳນຳ (ກໍລະນີຢືມເງິນຈາກໂຮງຈຳນຳແລ້ວເຮັດການຈຳນຳໃຫ້ໂຮງຈຳນຳດັ່ງກ່າວ).
ຕົວຢ່າງ	**ກ** ຕ້ອງການເງິນສົດ ຈຳນວນ 2.000.000 ກີບ ຈຶ່ງໄດ້ເອົາໂມງທີ່ເຮັດດ້ວຍເງິນຂອງຕົນໄປຮ້ານຈຳນຳ **ຂ**. ໂດຍໄດ້ຈຳນຳໂມງດັ່ງກ່າວແລ້ວຮັບເອົາເງິນກູ້ຢືມຈາກໂຮງຈຳນຳ **ຂ** ຈຳນວນ 2.000.000 ກີບ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງໃໝ່ ມາຈາກດຳລັດວ່າດ້ວຍໂຮງຊວດຈຳ ເລກທີ 10/ນຍ ລົງວັນທີ 02 ກຸມພາ 2002.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 528 - 531 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ວຄວ້າ.

ມາດຕາ 533 ການຈຳນຳດ້ວຍເອກະສານ

ການຈຳນຳດ້ວຍເອກະສານ ແມ່ນສັນຍາ ຊຶ່ງລູກໜີ້ໄດ້ມອບເອກະສານຢັ້ງຢືນກຳມະສິດສັງຫາລິມະຊັບສະບັບຕົ້ນໃຫ້ແກ່ເຈົ້າໜີ້ ເພື່ອຮັບປະກັນການໃຊ້ແທນໜີ້ສິນ, ແຕ່ລູກໜີ້ຍັງມີສິດຄອບຄອງ ແລະ ນຳໃຊ້ຊັບດັ່ງກ່າວຕໍ່ໄປ.

ໃນການຈຳນຳດ້ວຍເອກະສານ ລູກໜີ້ ຍັງເປັນເຈົ້າກຳມະສິດໃນຊັບ ແລະ ມີສິດນຳໃຊ້ຊັບດັ່ງກ່າວ ແຕ່ບໍ່ມີສິດ ຂາຍ, ໂອນ ຫຼື ນຳໄປຈຳນຳຕໍ່. ນອກຈາກນັ້ນ ລູກໜີ້ ຕ້ອງປົກປັກຮັກສາວັດຖຸສິ່ງຂອງດັ່ງກ່າວ ໃຫ້ຢູ່ໃນສະພາບເດີມ.

ຖ້າລູກໜີ້ ຫາກບໍ່ໃຊ້ແທນໜີ້ສິນ ຫຼື ບໍ່ປະຕິບັດພັນທະ ຕາມກຳນົດເວລາທີ່ໄດ້ຕົກລົງກັນ, ເຈົ້າໜີ້ ມີສິດທອງເອົາວັດຖຸເປົ້າໝາຍການຈຳນຳຈາກລູກໜີ້.

ເຈົ້າໜີ້ມີສິດທວງ, ຕິດຕາມເອົາສັງຫາລິມະຊັບ ທີ່ໄດ້ນຳມາຈຳນຳນັ້ນ ໃນກໍລະນີຊັບດັ່ງກ່າວ ຫາກຢູ່ນຳ ລູກໜີ້.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນວ່າການຈຳນຳດ້ວຍເອກະສານແມ່ນຫຍັງພ້ອມທັງໃຫ້ເຫັນນິ ຍາມ, ເງື່ອນໄຂຂອງສັນຍາ.
ຕົວຢ່າງ	**ກ** ມີລົດຈັກເປັນກຳມະສິດຂອງໂຕເອງພ້ອມເອກະສານຢັ້ງຢືນສິດໃນລົດຄັນດັ່ງ ກ່າວເພື່ອຢືມເງິນຈາກ **ຂ** ຈຳນວນ 3.000.000 ກີບ **ກ** ໄດ້ນຳເອົາເອກະສານຂອງ ລົດດັ່ງກ່າວ ໄປໄວ້ນຳ **ຂ** ໂດຍການເຮັດຈຳນຳດ້ວຍເອກະສານກໍລະນີທີ່ກາຍກຳ ນົດໃຊ້ໜີ້ແລ້ວແຕ່ກຫາກບໍ່ສາມາດໃຊ້ໜີ້ຄືນໃຫ້ຂຕາມທີ່ຕົກລົງກັນໄວ້, ແມ່ນ **ຂ** ສາມາດທວງໃຫ້ **ກ** ສົ່ງມອບລົດຈັກຄັນດັ່ງກ່າວແລ້ວນຳເອົາລົດພ້ອມເອກະ ສານຢັ້ງຢືນສິດໄປຂາຍເພື່ອເອົາເງິນຈາກການຂາຍລົດດັ່ງກ່າວມາທົດແທນ ການເກັບໜີ້ຂອງຕົນພາຍຫຼັງໃຊ້ໜີ້ກັນແລ້ວຖ້າເງິນຍັງເຫຼືອ**ຂ**ຈະຕ້ອງໄດ້ສົ່ງເງິນ ທີ່ເຫຼືອນັ້ນຄືນໃຫ້ **ກ**.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາກມາດຕາ 15 ແລະ 16 ຂອງກົດໝາຍວ່າດ້ວຍການຄ້ຳປະກັນ ການປະຕິບັດສັນຍາ ປີ 2005.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງ ຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 534 ການຈຳນຳດ້ວຍສິນຄ້າໃນສາງ

ການຈຳນຳດ້ວຍສິນຄ້າໃນສາງ ແມ່ນການນຳເອົາໃບຢັ້ງຢືນສິນຄ້າໃນສາງໄປຄ້ຳປະກັນການໃຊ້ແທນ ໜີ້ສິນ ຫຼື ການປະຕິບັດພັນທະນຳເຈົ້າໜີ້. ໃບຢັ້ງຢືນສິນຄ້າໃນສາງ ສາມາດປ່ຽນມືໄດ້.

ຜູ້ຊື້ ສິນຄ້າໃນສາງ ສາມາດເອົາສິນຄ້າໄປໄດ້ ໂດຍບໍ່ມີຄວາມຮັບຜິດຊອບຕໍ່ສິດ ແລະ ພັນທະ ຕາມ ສັນຍາຈຳນຳດ້ວຍສິນຄ້າໃນສາງ, ເຖິງວ່າ ຜູ້ຊື້ ໄດ້ຮູ້ວ່າສິນຄ້າດັ່ງກ່າວ ກ່ຽວຂ້ອງກັບການຄ້ຳປະກັນກໍຕາມ.

ສິນຄ້າໃນສາງ ແມ່ນ ຊັບໝູນວຽນ, ສິນຄ້າ ເພື່ອຂາຍ ຫຼື ໃຫ້ເຊົ່າ, ວັດຖຸດິບ ຫຼື ວັດສະດຸ ເພື່ອການ ຜະລິດ ຫຼື ການດຳເນີນທຸລະກິດ.

ຈຸດປະສົງ	ເພື່ອກຳນົດກ່ຽວກັບວິທີການເຮັດຈຳນຳສິນຄ້າໃດໜຶ່ງທີ່ຢູ່ໃນສາງທັງໝົດໃນນາມ ເປັນຊັບດຽວເຖິງວ່າເນື້ອໃນຈະມີການໝູນວຽນກໍຕາມ.
ຕົວຢ່າງ	**ກ** ກູ້ຢືມເງິນນຳ ບໍລິສັດ **ຂ** ຈຳກັດ ຜູ້ດຽວ ຈຳນວນ 100.000.000 ກີບ ພາຍໃນກຳນົດຫົກເດືອນ ຊຶ່ງເອົາເອກະສານການຢັ້ງຢືນສິນຄ້າທີ່ມີໃນສາງ ເຊັ່ນ ສະຫ່ວານໄຟຟ້າ ຈຳນວນ 100 ອັນ ມີມູນຄ່າ ຈຳນວນ 120.000.000 ກີບ ເພື່ອ ມາເປັນຫຼັກຄ້ຳປະກັນໃນການຈຳນຳ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກມາດຕາ 17 ແລະ 18 ຂອງກົດໝາຍວ່າດ້ວຍການຄ້ຳ ປະກັນການປະຕິບັດສັນຍາ ປີ 2005; ແລະ ມາດຕາ 6 ສັນຍາຄ້ຳປະກັນດ້ວຍ ສັງຫາລິມະຊັບຂອງດຳລັດຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຄ້ຳປະກັນ ການປະຕິບັດສັນຍາ ປີ 2011 (ການອະທິບາຍໃນຈຸດນີ້ ແມ່ນໃຫ້ເຫັນໜັງສື ຢັ້ງຢືນສິດເປັນຫຼັກ) ເອກະສານການຢັ້ງຢືນສິນຄ້າໃນສາງຊຶ່ງເປັນການຢັ້ງຢືນ ແລະ ການຮັບຮູ້ວ່າ ເອກະສານນັ້ນແມ່ນມີສິນຄ້າປະເພດໃດໜຶ່ງ ຊຶ່ງສາມາດຕີ ເປັນມູນຄ່າຕາມຄຸນລັກສະນະ ແລະ ປະເພດຂອງແຕ່ລະສິນຄ້ານັ້ນ ແລະ ສາມາດ ໝູນວຽກປ່ຽນມືໄດ້.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງ ຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.

ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນ ຫຼື ປະເພນີສານ	ຕາມວັກສາມຂອງມາດຕານີ້ ສິນຄ້າໃນສາງ ອາດລວມເອົາສິນຄ້າທີ່ມີລັກສະນະຊົມໃຊ້ ແລະ ເປັນປະເພດທີ່ເຊື່ອມຄຸນນະພາບ ແລະ ເຊື່ອມລັກສະນະໄດ້ໄວນັ້ນ ແມ່ນສາມາດເອົາໄປເຮັດການຈຳນຳໄດ້ ຖ້າມີການຕົກລົງກັນລະຫ່ວາງຜູ້ຮັບຈຳນຳ ແລະ ຜູ້ຈຳນຳແລ້ວ ເຖິງແມ່ນວ່າສິນຄ້າທີ່ມີລັກສະນະເຊື່ອມຄຸນໄວກໍຕາມ ເຊັ່ນ: ເຂົ້າ, ປູນຊີເມັນ, ເຂົ້າສານ, ຜັກ ຫຼື ໝາກໄມ້ ແລະ ປະເພດອື່ນອີກຊຶ່ງຜູ້ຈຳນຳສາມາດຂາຍອອກໄດ້ກ່ອນໝົດອາຍຸຊົມໃຊ້ ຫຼື ກ່ອນການເຊື່ອມສະພາບ ແລະ ຕ້ອງນຳເອົາຊັບສະນິດດຽວກັນເຂົ້າມາສາງແທນ ໃນປະລິມານ ແລະ ຄຸນນະພາບອັນດຽວກັນ.

ກ2. ການຈຳນຳດ້ວຍອະສັງຫາລິມະຊັບ

ມາດຕາ 535 ການຈຳນຳດ້ວຍອະສັງຫາລິມະຊັບ

ການຈຳນຳດ້ວຍອະສັງຫາລິມະຊັບ ແມ່ນການຮັບປະກັນການໃຊ້ແທນໜີ້ສິນ ຫຼື ການປະຕິບັດພັນທະດ້ວຍອະສັງຫາລິມະຊັບ ຊຶ່ງຜູ້ຈຳນຳ ເອົາອະສັງຫາລິມະຊັບ ໄປໄວ້ຢູ່ໃນການຄອບຄອງຂອງຜູ້ຮັບຈຳນຳ ຫຼື ບຸກຄົນອື່ນຕາມການຕົກລົງ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນນິຍາມການຈຳນຳດ້ວຍອະສັງຫາລິມະຊັບ.
ຕົວຢ່າງ	**ກ** ກູ້ຢືມເງິນນຳ ບໍລິສັດ **ຂ** ຈຳກັດ ຜູ້ດຽວ ຈຳນວນ 800.000.000 ກີບ ພາຍໃນກຳນົດສອງປີ ໂດຍເອົາຫ້ອງແຖວຈຳນວນ ສິບຫ້ອງ ເປັນຫຼັກຊັບຄ້ຳປະກັນ ໂດຍບໍ່ມີການຄິດໄລ່ດອກເບ້ຍຂອງເຈົ້າໜີ້ (ເຈົ້າຂອງບໍລິສັດ **ຂ**) ແຕ່ໃຫ້ເຈົ້າໜີ້ສາມາດບໍລິຫານຫ້ອງແຖວໂດຍການເກັບຄ່າເຊົ່າ ແລະ ບຳລຸງປົກປັກຮັກສາ ຫ້ອງແຖວນັ້ນ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງໃໝ່ ເພື່ອໃຫ້ເປັນທາງເລືອກໜຶ່ງແກ່ເຈົ້າໜີ້ ແລະ ລູກໜີ້ ສາມາດນຳໃຊ້ຊັບຂອງຕົນເພື່ອການກູ້ຢືມເງິນໂດຍບໍ່ມີການກຳນົດດອກເບ້ຍຈາກການກູ້ຢືມ (ຈາກເຈົ້າໜີ້) ແຕ່ມີເງື່ອນໄຂວ່າຊັບຕ້ອງຢູ່ໃນການຄອບຄອງ ເບິ່ງແຍງ ຈາກເຈົ້າໜີ້ ແລະ ເຈົ້າໜີ້ແມ່ນສາມາດນຳໃຊ້ ແລະ ໄດ້ຮັບໝາກຜົນໃນຊັບດັ່ງກ່າວ ແລະ ເຈົ້າໜີ້ກໍຍັງມີພັນທະໃນການປົກປັກຮັກສາຊັບນັ້ນໃຫ້ຢູ່ໃນສະພາບດີ ແລະ ສາມາດນຳໃຊ້ຕໍ່ໄປໄດ້ອີກ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 356 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 536 ເງື່ອນໄຂຂອງການຈຳນຳດ້ວຍອະສັງຫາລິມະຊັບ

ການຈຳນຳດ້ວຍອະສັງຫາລິມະຊັບ ປະກອບດ້ວຍເງື່ອນໄຂ ດັ່ງນີ້:

1. ມີສັນຍາໃຊ້ແທນໜີ້ສິນ ຫຼື ການປະຕິບັດພັນທະ;
2. ມີການຕົກລົງຈຳນຳ;
3. ເປັນກຳມະສິດຂອງຜູ້ຈຳນຳ;
4. ມີກຳນົດເວລາບໍ່ໃຫ້ເກີນ ຫ້າປີ, ສາມາດຕໍ່ໄດ້ ຕາມການຕົກລົງຂອງຄູ່ສັນຍາ ຊຶ່ງການຕໍ່ແຕ່ລະຄັ້ງ ບໍ່ໃຫ້ເກີນ ຫ້າປີ;
5. ຢູ່ໃນການຄອບຄອງຂອງຜູ້ຮັບຈຳນຳ;
6. ຕ້ອງເຮັດເປັນລາຍລັກອັກສອນ ແລະ ນຳໄປຈົດທະບຽນນຳຫ້ອງການຊັບພະຍາກອນທຳມະ ຊາດ ແລະ ສິ່ງແວດລ້ອມ ຫຼື ພາກສ່ວນອື່ນທີ່ກ່ຽວຂ້ອງ.

ຈຸດປະສົງ	ເພື່ອກຳນົດໃຫ້ຄູ່ສັນຍາສາມາດເຂົ້າໃຈ ແລະ ຮັບຮູ້ກ່ຽວກັບເງື່ອນໄຂເພື່ອເຮັດການຈຳນຳດ້ວຍອະສັງຫາລິມະຊັບ ຊຶ່ງເປັນສິ່ງທີ່ຈຳເປັນ ແລະ ຂາດບໍ່ໄດ້.
	1. ກ ກູ້ຢືມເງິນ ຈຳນວນ 20.000.000 ກີບ ນຳ **ຂ** ໂດຍເອົາເຮືອນຫ້ອງແຖວ 5 ຫ້ອງ ໄປຈຳນຳ ເພື່ອຮັບປະກັນການໃຊ້ແທນໜີ້ສິນໃນການກູ້ຢືມຕ້ອງມີສັນຍາກູ້ຢືມຫຼື ສັນຍາການໃຊ້ແທນໜີ້ສິນ ຊຶ່ງຮັບປະກັນດ້ວຍອະສັງຫາຣິມະຊັບທີ່ນຳມາຈຳນຳນັ້ນ ໃນສັນຍາກູ້ຢືມອາດຈະເຮັດເປັນສະບັບດຽວກັບກັບການຈຳນຳກໍໄດ້ ຫຼື ອາດແຍກເປັນສັນຍາການຈຳນຳດ້ວຍອະສັງຣິມະຊັບສະເພາະກໍໄດ້ ຊຶ່ງທັງໝົດແມ່ນຂຶ້ນກັບການຕົກລົງຂອງ **ກ** ແລະ **ຂ**. **2.** ເຮືອນຫ້ອງແຖວທີ່ນຳມາຈຳນຳນັ້ນ ຕ້ອງເປັນກຳມະສິດຂອງ **ກ** ໝາຍວ່າ **ຂ** ເປັນເຈົ້າຂອງເຮືອນຫ້ອງແຖວແທ້ ແລະ ອອກຊື່ລາວແທ້. **3.** ການຈຳນຳອະສັງຫາຣິມະຊັບລະຫວ່າງ **ກ** ແລະ **ຂ** ແມ່ນຫ້າປີ (ຖ້າໝົດກຳນົດແມ່ນສາມາດຕໍ່ກຳນົດເວລາໄດ້ຊຶ່ງການຕໍ່ແຕ່ລະຄັ້ງແມ່ນບໍ່ໃຫ້ເກີນຫ້າປີ). **4.** ເຮືອນຫ້ອງແຖວທີ່ **ກ** ນຳໄປຈຳນຳນັ້ນ ຕ້ອງໄດ້ເອົາໃຫ້ **ຂ** ເພື່ອຄອບຄອງ ແລະ ສາມາດນຳໃຊ້ ແລະ ໄດ້ຮັບໝາກຜົນໄດ້ຕາມການຕົກລົງ ແລະ ກຳນົດເວລາຂອງສັນຍາ.
ຕົວຢ່າງ	**5.** ສັນຍາຈຳນຳດ້ວຍຊັບອະສັງຫາຣິມະຊັບ ຕ້ອງໄດ້ເປັນລາຍລັກອັກສອນ ແລະ ຈົດທະບຽນການນຳຈຳນຳພາກສ່ວນທີ່ກ່ຽວຂ້ອງ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງໃໝ່ ການກຳນົດແມ່ນຄວາມຈຳເປັນ ແລະ ສຳຄັນຫຼາຍ ໃນການກູ້ຢືມໂດຍສະເພາະກໍຄືເງື່ອນໄຂ ຫຼື ລະບຽບການໃນການເຮັດການຈຳນຳດ້ວຍອະສັງຫາຣິມະຊັບນີ້ ເປັນຫຼັກການໃໝ່ທີ່ກຳນົດໃຫ້ຄູ່ສັນຍາມີສິດເລືອກນຳໃຊ້ ໂດຍສະເພາະກໍແມ່ນອະສັງຫາຣິມະຊັບທີ່ນຳມາຈຳນຳນັ້ນ ຕ້ອງແມ່ນເຈົ້າໜີ້ເປັນຜູ້ຄອບຄອງ, ປົກປັກຮັກສາ, ການຈັດການບໍລິຫານຊັບ ແລະ ຍັງໄດ້ຮັບຜົນປະໂຫຍດຈາກຊັບດັ່ງກ່າວນັ້ນ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 360 ແລະ 361 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ; ມາດຕາ 838 ຂອງປະມວນກົດໝາຍແພ່ງກຳປູເຈຍ.
ມາດຕາອ້າງອີງ	ມາດຕາ 562 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄ້ວາ.

ມາດຕາ 537 ຜົນການຈຳນຳດ້ວຍອະສັງຫາລິມະຊັບ

ອະສັງຫາລິມະຊັບທີ່ນຳໄປຈຳນຳນັ້ນ ຍັງເປັນກຳມະສິດຂອງຜູ້ຈຳນຳຢູ່ແຕ່ຢູ່ໃນການຄອບຄອງຂອງຜູ້ຮັບຈຳນຳ. ຜູ້ຮັບຈຳນຳ ມີສິດນຳໃຊ້ ຫຼື ໄດ້ຮັບໝາກຜົນຈາກຊັບດັ່ງກ່າວ ແຕ່ບໍ່ມີສິດຄິດໄລ່ດອກເບ້ຍ ຈາກຜູ້ຈຳນຳ. ຜູ້ຮັບຈຳນຳມີບຸລິມະສິດໄດ້ຮັບການໃຊ້ແທນໜີ້ສິນ ຫຼື ການປະຕິບັດພັນທະ ກ່ອນເຈົ້າໜີ້ຄົນອື່ນ ແຕ່ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນມາດຕາ 524 ຂອງປະມວນກົດໝາຍສະບັບນີ້.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນເຖິງສິດຂອງຜູ້ຮັບຈຳນຳ ແລະ ສິດຂອງຜູ້ຈຳນຳກ່ຽວກັບຜົນຂອງການເຮັດຈຳນຳດ້ວຍອະສັງຫາລິມະຊັບ.

ຕົວຢ່າງ	**ກ** ກູ້ຢືມເງິນ ຈຳນວນ 300.000.000 ກີບ ກັບ **ຂ** ໂດຍເອົາຫ້ອງແຖວ 50 ຫ້ອງໄວ້ໃນການຄອບຄອງຂອງເຈົ້າໜີ້ ຄື **ຂ** ເພື່ອເປັນຫຼັກຊັບໃນການຄ້ຳປະກັນການຈຳນຳ ພາຍໃນກຳນົດເວລາຫ້າປີ ແຕ່ວ່າກຳມະສິດແມ່ນຍັງເປັນຂອງ ກ ຢູ່ ໝາຍຄວາມວ່າ ລາວຍັງເປັນເຈົ້າຂອງຫ້ອງແຖວນັ້ນຂະທີ່ຄອບຄອງຫ້ອງແຖວໄວ້ນັ້ນແມ່ນມີສິດໃນການນຳໃຊ້, ໄດ້ຮັບໝາກຜົນ ແລະ ປົກປັກຮັກສາຫ້ອງແຖວທີ່ລູກໜີ້ນຳມາຈຳນຳນັ້ນເຊັ່ນ: ໃນການບໍລິຫານຫ້ອງແຖວກໍຄືການເກັບຄ່າເຊົ່າແຕ່ລະເດືອນ/ປີ, ການບໍລິຫານຄຸ້ມຄອງ, ການຈ່າຍເງິນເດືອນພະນັກງານ, ການປົກປັກຮັກສາອະນາໄມພັນທະໃນການສ້ອມແປງເມື່ອເປ່ເພ ລວມໄປເຖິງພັນທະໃນການເສຍພາສີອາກອນຕ່າງໆ ໝາຍຄວາມວ່າ ທຸກການໃຊ້ຈ່າຍທີ່ເກີດຂຶ້ນຈາກການບໍລິຫານຄຸ້ມຄອງຫ້ອງແຖວແມ່ນ **ຂ** ຕ້ອງເປັນຜູ້ຮັບຜິດຊອບຕາມກຳນົດເວລາຫ້າປີໃນສັນຍາການກູ້ຢືມນັ້ນໂດຍພາຍໃຕ້ເງື່ອນໄຂທີ່ວ່າ **ຂ** ບໍມີສິດໃນການຄິດໄລ່ດອກເບັ້ຍ ຫຼື ເກັບດອກເບັ້ຍຂອງສັນຍາກູ້ຢືມເງິນນຳ **ກ**, **ຂ** ເປັນຜູ້ຄອບຄອງຊັບຖືໄດ້ວ່າເປັນຜູ້ມີສິດພິເສດ ຫຼື ເອີ້ນວ່າບຸລິມະສິດໃນການໄດ້ຮັບການໃຊ້ແທນໜີ້ສິນກ່ອນເຈົ້າໜີ້ອື່ນໆ (ຄອບຄອງຊັບ ແລະ ຈົດທະບຽນການຈຳນຳ) ຖ້າວ່າ **ກ** ຫາກໄດ້ເອົາຫ້ອງແຖວໄປຈຳນຳການກູ້ຢືມນຳເຈົ້າໜີ້ອື່ນໆອີກ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງໃໝ່ ຍ້ອນວ່າ ໃນການກຳນົດຫຼັກການນີ້ແມ່ນເພື່ອໃຫ້ທາງເລືອກຕໍ່ເຈົ້າໜີ້ໃນຜົນຂອງການຄອບຄອງຊັບຂອງລູກໜີ້ ພາຍໃນກຳນົດເວລາທີ່ກຳນົດໃນສັນຍາ ແລະ ສາມາດຕໍ່ໄດ້ຕາມການຕົກລົງ, ສ່ວນໃຫ່ຍຕາມການຄົ້ນຄ້ວານີ້ກໍເປັນພຽງຫຼັກການໜຶ່ງທີ່ກຳນົດຂຶ້ນ ໂດຍໃຫ້ທາງເລືອກ ແລະ ຜົນປະໂຫຍດຂອງທັງສອງຝ່າຍ(ຄູ່ສັນຍາ) ໝາຍຄວາມວ່າ ຕ່າງຝ່າຍຕ່າງໄດ້ຮັບຜົນປະ�โຫຍດ, ແຕ່ເນື່ອງຈາກວ່າກ່ຽວກັບກໍລະນີດັ່ງກ່າວນີ້ແມ່ນມີຄວາມສ່ຽງຫຼາຍ ທີ່ເຈົ້າໜີ້ຈະໄດ້ຮັບຜົນ ແລະ ບຸກຄົນ ຫຼື ນັກທຸລະກິດສ່ວນຫຼາຍ ແມ່ນບໍ່ຄ່ອຍນິຍົມ ຫຼື ເຫັນດີໃນການເລືອກການຈຳນຳປະເພດນີ້ ແຕ່ເຖິງຢ່າງໃດກໍຕາມການຈຳນຳການຄ້ຳປະກັນທີ່ບໍ່ຄິດໄລ່ດອກເບັ້ຍຂອງສັນຍາກູ້ຢືມກໍເປັນຫຼັກການໜຶ່ງທີ່ມີຄວາມສຳຄັນ ແລະ ສາມາດນຳໃຊ້ເປັນປະ�โຫຍດກໍໄດ້ຫາກເຫັນດີຍອມຮັບເງື່ອນໄຂ ແລະ ຜົນປະ�โຫຍດທີ່ເກີດຂຶ້ນນັ້ນໄດ້.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 356-361 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ; ມາດຕາ 834 ຂອງປະມວນກົດໝາຍແພ່ງກຳປູເຈັຍ.
ມາດຕາອ້າງອີງ	ມາດຕາ 524 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄ້ວາ.

ມາດຕາ 538 ການຈ່າຍຄ່າປົກປັກຮັກສາອະສັງຫາລິມະຊັບ

ຜູ້ຮັບຈຳນຳຕ້ອງຮັບຜິດຊອບໃນການຈ່າຍຄ່າຄຸ້ມຄອງ, ປົກປັກຮັກສາ, ສ້ອມແປງ, ການໃຊ້ຈ່າຍອື່ນກ່ຽວກັບອະສັງຫາລິມະຊັບນັ້ນ, ຜູ້ຮັບຈຳນຳ ຫຼື ຜູ້ໄດ້ຮັບມອບໝາຍໃຫ້ປົກປັກຮັກສາຊັບ ຕ້ອງຮັບຜິດຊອບໃຊ້ແທນຄ່າເສຍຫາຍ ໃນກໍລະນີຊັບນັ້ນ ຫາກມີການເປ່ເພ ຫຼື ເສຍຫາຍ ຍ້ອນຄວາມຜິດພາດຂອງຕົນ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນກ່ຽວກັບການຄຸ້ມຄອງຮັກສາຊັບທີ່ເປັນເປົ້າໝາຍເມື່ອມີການຈຳນຳໂດຍອະສັງຫາລິມະຊັບ.

ຕົວอย่างๆ	**ກ** ກູ້ຢືມເງິນ ຈຳນວນ 30.000.000 ກີບ ກັບ**ຂ** ໂດຍເອົາຫ້ອງແຖວ 50ຫ້ອງ ໃຫ້ໄວ້ໃນການຄອບຄອງຂອງເຈົ້າໜີ້ ຄື **ຂ** ເພື່ອເປັນຫຼັກຊັບໃນການຈຳນຳການຄ້ຳປະກັນ ພາຍໃນກຳນົດເວລາຫ້າປີ ແຕ່ວ່າກຳມະສິດແມ່ນຍັງເປັນຂອງ **ກ** ຢູ່ (ໝາຍຄວາມວ່າລາວຍັງເປັນເຈົ້າຂອງຫ້ອງແຖວນັ້ນ.) **ຂ** ທີ່ຄອບຄອງຫ້ອງແຖວໄວ້ນັ້ນແມ່ນມີສິດໃນການນຳໃຊ້, ໃນການບໍລິຫານຫ້ອງແຖວ ໂດຍພາຍໃຕ້ເງື່ອນໄຂທີ່ວ່າ ຂໍບໍ່ມີສິດໃນການຄິດໄລ່ດອກເບี้ย ຫຼື ເກັບດອກເบี้ยຂອງສັນຍາກູ້ຢືມກັບ**ຂ** ນອກຈາກສິດທິດັ່ງກ່າວແລ້ວ ຜູ້ກ່ຽວກໍຍັງມີພັນທະໃນການເບິ່ງແຍງບົວລະບັດ ຫ້ອງແຖວ ຫຼື ອາດຈ້າງຄົນມາບໍລິຫານ ຫຼື ທຳຄວາມສະອາດ ແລະ ຖ້າເກີດມີການຊຳລຸດ ເປ່ເພ ຫຼື ຊັບສິ່ງຂອງໃນຫ້ອງແຖວເຊັ່ນວ່າ ເຄື່ອງເຟີນີເจີ້ຕ່າງໆເປ່ເພກໍຕ້ອງມີພັນທະໃນການສ້ອມແປງເຊັ່ນດຽວກັນນອກຈາກນັ້ນຖ້າຊັບທີ່ຢູ່ໃນຫ້ອງແຖວທີ່ເກີດຈາກການຈຳນຳນັ້ນຫາກສູນເສຍ ຫຼື ເສຍຫາຍຜູ້ທີ່ເບິ່ງແຍ່ງ ຫຼື ຜູ້ເປັນເຈົ້າໜີ້ **ຂ** ກໍຕ້ອງຮັບຜິດຊອບໃນການໃຊ້ແທນເຊັ່ນດຽວກັນ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງໃໝ່ ເພື່ອເປັນການປົກປັກຮັກສາຊັບຂອງຜູ້ທີ່ນຳມາຈຳນຳ ແລະ ເພື່ອໃຫ້ໄດ້ຮັບຜົນປະໂຫຍດທັງສອງຝ່າຍ ຕາມຄວາມເປັນຈິງແລ້ວຊັບໃດທີ່ເจົ້າໜີ້ຫາກໄດ້ຮັບໝາກຜົນໃນການຄຸ້ມຄອງເບິ່ງແຍ່ງແລ້ວ ກໍຕ້ອງມີພັນທະໃນການປົກປັກຮັກສາ ລວມເຖິງການບໍລິຫານຕ່າງໆ ທີ່ອາດເກີດຂຶ້ນໄດ້ ຕາມການຕົກລົງໃນສັນຍາ ຫຼື ຕາມການກຳນົດຂອງປະມວນກົດໝາຍແພ່ງ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 357 ຂອງປະມວນແພ່ງຍີ່ປຸ່ນ; ມາດຕາ 759-760 ຂອງປະມວນແພ່ງໄທ.
ມາດຕາອ້າງອີງ	ມາດຕາ 537 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄ້ວາ.

ມາດຕາ 539 ການສົ່ງຄືນ ແລະ ການຂາຍອະສັງຫາລິມະຊັບ

ເມື່ອລູກໜີ້ ຫາກໄດ້ໃຊ້ແທນໜີ້ສິນ ຫຼື ປະຕິບັດພັນທະຄົບຖ້ວນແລ້ວ ການຈຳນຳກຳຈະສິ້ນສຸດລົງ, ອະສັງຫາລິມະຊັບທີ່ເອົາມາຈຳນຳນັ້ນ ຕ້ອງສົ່ງຄືນຜູ້ຈຳນຳໃນສະພາບເດີມ ແລະ ການຈົດທະບຽນການຈຳນຳກຳຈະຖືກລົບລ້າງ.

ຖ້າລູກໜີ້ ຫາກບໍ່ໃຊ້ແທນໜີ້ສິນ ຫຼື ບໍ່ປະຕິບັດພັນທະ ຕາມກຳນົດເວລາແລ້ວ ແລະ ເจົ້າໜີ້ ແລະ ລູກໜີ້ບໍ່ສາມາດຕົກລົງກັນໄດ້ ເจົ້າໜີ້ຈຶ່ງມີສິດປະກາດຂາຍ ຫຼື ປະມູນຂາຍອະສັງຫາລິມະຊັບດັ່ງກ່າວ ຕາມມູນຄ່າຕະຫຼາດໃນເວລານັ້ນ. ໃນກໍລະນີອະສັງຫາລິມະຊັບນັ້ນ ຫາກມີມູນຄ່າສູງກວ່າໜີ້ສິນແລ້ວ, ເມື່ອເจົ້າໜີ້ຫາກຫັກເອົາໜີ້ສິນ ລວມທັງຄ່າໃຊ້ຈ່າຍຕ່າງໆຄົບຖ້ວນແລ້ວ ສ່ວນທີ່ຍັງເຫຼືອຈາກການໃຊ້ແທນໜີ້ສິນນັ້ນຕ້ອງສົ່ງຄືນໃຫ້ຜູ້ຈຳນຳທັງໝົດ. ຖ້າຈຳນວນເງິນທີ່ໄດ້ຈາກການຂາຍອະສັງຫາລິມະຊັບນັ້ນ ຫາກບໍ່ພຽງພໍກັບໜີ້ສິນແລ້ວ ໃຫ້ລູກໜີ້ ຕື່ມໃສ່ຈົນຄົບຖ້ວນ.

ຜູ້ທີ່ເຫັນດີເອົາອະສັງຫາລິມະຊັບຂອງຕົນໄປໃຫ້ຈຳນຳ ແລະ ໃຊ້ແທນໜີ້ສິນ ຫຼືປະຕິບັດພັນທະແທນລູກໜີ້ດ້ວຍຊັບນັ້ນແລ້ວ ມີສິດໄດ້ຮັບການທົດແທນຄືນຈາກລູກໜີ້ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 558 ວັກທີສີ່ຂອງປະມວນກົດໝາຍສະບັບນີ້.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນການຈຳນຳດ້ວຍອະສັງຫາລິມະຊັບແມ່ນຈະຕ້ອງໄດ້ສົ່ງອະສັງຫາລິມະຊັບຄືນ ຖ້າຫາກໃຊ້ແທນໜີ້ສິນຄົບຖ້ວນ ແລະ ການນຳໃຊ້ສິດຕໍ່ການຈຳນຳກໍລະນີບໍ່ໄດ້ຮັບການໃຊ້ແທນໜີ້ສິນ.

ຕົວຢ່າງ	**ກ** ກູ້ຢືມເງິນ ຈຳນວນ 300.000.000 ກີບ ໂດຍເອົາຫ້ອງແຖວ 50 ຫ້ອງ ໃຫ້ໃນການຄອບຄອງຂອງເຈົ້າໜີ້**ຂ**ເພື່ອເປັນຫຼັກຊັບໃນການຈຳນຳການຄ້ຳປະກັນ ພາຍໃນກຳນົດຫ້າປີ, ຫຼັງຈາກນັ້ນກຳນົດເວລາການປະຕິບັດສັນຍາໄດ້ຈົບລົງ **ກ**ໄດ້ເອົາເງິນຈຳນວນ 300.000.000ກີບ ທີ່ຢືມໄປນັ້ນ ມາສົ່ງຄືນ ໃຫ້ **ຂ** ແລະ **ຂ** ເອງກໍໄດ້ ສົ່ງຄືນຫ້ອງແຖວທີ່ຕົນເອງບໍລິຫານຢູ່ນັ້ນ ໃນສະພາບປົກກະຕິ ແລະ ສັນຍາການຈົດທະບຽນການຈຳນຳກໍແມ່ນຈະໄດ້ຮັບການລຶບລ້າງຕາມລະບຽບການ. ແລະ ໃ**ນ**ກໍລະນີຖ້າວ່າຄົບຫ້າປີ ແລ້ວ ແຕ່ທັງສອງຝ່າຍຫາກຍັງເຫັນດີ ຕົກລົງກັນໃນການຕໍ່ສັນຍາອີກກໍຖືວ່າມີຄວາມສາມາດໃນການດຳເນີນການໄດ້ຕາມຈຸດປະສົງຂອງທັງສອງຝ່າຍ. ຖ້າໃນກໍລະນີ **ກ** ເມື່ອຮອດກຳນົດເວລາຫ້າປີແລ້ວແຕ່ ລາວຍັງບໍ່ສາມາດນຳເອົາເງິນຈຳນວນ 300.000.000 ກີບ ທີ່ຢືມໄປນັ້ນມາສົ່ງຄືນ **ຂ** ແລ້ວ ກໍໃຫ້ປະຕິບັດດັ່ງນີ້: - ຫ້ອງແຖວ 50 ຫ້ອງນັ້ນ ແມ່ນຕ້ອງໄດ້ປະກາດຂາຍຕາມລາຄາໃນທ້ອງຕະຫຼາດໃນປັດຈຸບັນ ຫຼື ເຮັດການປະເມີນມູນຄ່າຂອງຫ້ອງແຖວເພື່ອມາໃຊ້ແທນໜີ້ສິນ, ໃນກໍລະນີທີ່ບໍສາມາດຂາຍ, ຫຼື ບໍ່ສາມາດປະມູນໄດ້ນັ້ນ; - ເຈົ້າໜີ້ ແລະ ລູກໜີ້ ອາດມີການຕົກລົງເຈລະຈາຕໍ່ລອງເລື່ອງຫ້ອງແຖວ ອາດນຳໃຊ້ວິທີການໃນການຫຼຸດມູນຄ່າທີ່ປະເມີນຫຼື ລາຄາໃນທ້ອງຕະຫຼາດລົງຫຼື ເຮັດໃຫ້ຫ້ອງແຖວນັ້ນຖືກລົງກ່ວາລາຄາປັດຈຸບັນ, ຖ້າຫາກເຈົ້າໜີ້ມີຄວາມຕ້ອງການກໍສາມາດຊື້ເສັ້ງເອົາໄດ້ ໂດຍຫັກເອົາຕົ້ນທຶນ ຫຼື ຫັກເອົາໄວ້ສາມຮ້ອຍລ້ານກີບຕາມໜີ້ສິນ ແລະ ສ່ວນທີ່ຍັງເຫຼືອເທົ່າໃດນັ້ນ ແມ່ນຕ້ອງໄດ້ສົ່ງຄືນແກ່ **ກ**, ແຕ່ຖ້າວ່າ; - ໃນກໍລະນີທີ່ໄດ້ຂາຍຫ້ອງແຖວ50ຫ້ອງນັ້ນແລ້ວ ແຕ່ບໍ່ໄດ້ລາຄາຈຳນວນ 300.000.000 ກີບ ກໍໃຫ້ຖືວ່າເປັນຄວາມຮັບຜິດຊອບຂອງ **ກ** ທີ່ຕ້ອງໄດ້ຫາມາຕື່ມໃສ່ໃຫ້ຈົນຄົບຖ້ວນຕາມໜີ້ສິນຕົວຈິງ. ໃນກໍລະນີຫ້ອງແຖວທີ່ນຳໄປຈຳນຳນັ້ນຫາກເປັນຂອງບຸກຄົນອື່ນ **ຄ** ແລະ **ຄ** ເອງເຫັນດີ ແລະ ມອບໃຫ້ກເອົາໄປຈຳນຳການຄ້ຳປະກັນສັນຍາກູ້ຢືມນຳ **ຂ** ຖ້າຫາກວ່າຮອດກຳນົດເວລາການປະຕິບັດສັນຍາໃຊ້ແທນໜີ້ສິນແລ້ວແຕ່ກບໍສາມາດໃຊ້ແທນໄດ້ຕ້ອງໄດ້ເອົາຊັບທີ່ຈຳນຳການຄ້ຳປະກັນຊຶ່ງເປັນຂອງ **ຄ** ມາຂາຍ ເພື່ອໃຊ້ແທນໜີ້ສິນ **ຂ** ນັ້ນໃນກໍລະນີດັ່ງກ່າວ **ຄ** ຈະກາຍເປັນເຈົ້າໜີ້ຄົນໃໝ່ ແລະ **ກ** ເອງຕ້ອງຮັບຜິດຊອບໃຊ້ແທນໜີ້ສິນໃຫ້ຄຫຼືໃນກໍລະນີຄຫາກໃຊ້ແທນໜີ້ສິນ ໂດຍເອົາເງິນສາມຮ້ອຍລ້ານກີບຂອງຕົນໂດຍຮັກສາຊັບຈຳນຳໄວ້ບໍນຳໄປຂາຍ ນັ້ນກໍເຊັນດຽວກັນຄມີສິດທວງໃຫ້ໄດ້ຮັບການທົດແທນເງິນຄືນຈາກ **ກ**, ໃນຈຳນວນເງິນ (300.000.000 ກີບ) ທີ່ໄດ້ຈ່າຍໜີ້ໃຫ້ກັບຂ, ຊຶ່ງຈະເຮັດໃຫ້ ຄ ກາຍເປັນເຈົ້າໜີ້ຄົນໃໝ່.

ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກມາດຕາ 14 ຂອງກົດໝາຍວ່າດ້ວຍການຄ້ຳປະກັນການປະຕິບັດສັນຍາ ປີ 2005, ການກຳນົດມາດຕານີ້ແມ່ນມີຄວາມສຳຄັນຫຼາຍ ເນື່ອງຈາກວ່າປັດຈຸບັນນີ້ ການໃຊ້ແທນໜີ້ສິນເນື່ງຈາກການບໍ່ປະຕິບັດສັນຍາ ຫຼື ພັນທະຕາມສັນຍາແມ່ນເກີດຂຶ້ນຫຼາຍ ແລະ ອີກຢ່າງໜຶ່ງການກູ້ຍືມເງິນ ທີ່ເກີດຂຶ້ນໂດຍເອົາຊັບໄປຄ້ຳປະກັນ ຫຼື ໄວ້ໃນການຄອບຄອງຂອງເຈົ້າໜີ້ນັ້ນສ່ວນໃຫ່ຍເຈົ້າໜີ້ຈະຄຳນຶງແຕ່ວ່າຖ້າບໍ່ໃຊ້ແທນໜີ້ສິນ ຊັບທີ່ຄອບຄອງນັ້ນ ແມ່ນຈະຕົກເປັນກຳມະສິດຂອງຕົນຊຶ່ງຈາກກໍລະນີນີ້ແມ່ນເຮັດໃຫ້ຄວາມອັບປະໂຫຍດເກີດຂຶ້ນກັບລູກໜີ້ຫຼາຍ ໂດຍທຽບມູນຄ່າໜີ້ສິນ ກັບຊັບສິນ ທີ່ນຳມາຈຳນຳນັ້ນ ແມ່ນມີຄວາມແຕກຕ່າງກັນຫຼາຍ ໝາຍຄວາມວ່າ ຊັບທີ່ຈຳນຳແມ່ນມີມູນຄ່າສູງກວ່າໜີ້ສິນຫຼາຍ. ສະນັ້ນ ການກຳນົດຄືນລະອຽດກ່ຽວກັບມາດຕານີ້ຈຶ່ງເປັນຜົນດີໃຫ້ຄູ່ສັນຍາໃນການແກ້ໄຂຂໍ້ຂັດແຍ່ງທີ່ເກີດຂຶ້ນໃນກໍລະນີບໍ່ສາມາດປະຕິບັດສັນຍາໄດ້ຕາມການຕົກລົງ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 764 ຂອງປະມວນກົດໝາຍແພ່ງ ແລະ ພານິດໄທ.
ມາດຕາອ້າງອີງ	ມາດຕາ 558 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄ້ວາ.

ກ3. ການຈຳນຳດ້ວຍສິດ

ມາດຕາ 540 ການຈຳນຳດ້ວຍສິດ

ການຈຳນຳດ້ວຍສິດ ແມ່ນການຮັບປະກັນການໃຊ້ແທນໜີ້ສິນ ຫຼື ການປະຕິບັດພັນທະດ້ວຍສິດທອງ, ສິດອື່ນ, ສິດຕໍ່ກົດຈະການໃດໜຶ່ງ ຫຼື ໝາກຜົນຂອງໂຄງການ

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນວ່າການຈຳນຳດ້ວຍສິດເປັນຄືແນວໃດລວມທັງໃຫ້ຮູ້ວ່າສິດແນວໃດຈຶ່ງສາມາດຈຳນຳໄດ້.
ຕົວຢ່າງ	**ກ** ໄດ້ກູ້ຍືມເງິນເປັນຈຳນວນ 50.000.000ກີບ ກັບ **ຂ** ໂດຍໄດ້ເອົາໜັງສື ຫຼື ປຶ້ມບັນຊີເງິນຝາກທະນາຄານ ໂດຍມີເງິນ ໃນບັນຊີຈຳນວນ 80.000.000 ກີບ ມາເປັນຫຼັກຊັບໃນການຮັບປະກັນການໃຊ້ແທນໜີ້ສິນ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 19 ຂອງກົດໝາຍວ່າດ້ວຍການຄ້ຳປະກັນການປະຕິບັດສັນຍາ ປີ 2005 ສິດທິຕ່າງໆທີ່ສາມາດນຳເອົາມາເປັນຫຼັກຊັບໃນການຄ້ຳປະກັນການປະຕິບັດສັນຍາເຊັ່ນ ສິດທອງ ແລະ ສິດອື່ນທີ່ບໍ່ແມ່ນສິດທອງ ຊຶ່ງອາດປະກອບດ້ວຍ ໃບຮຸ້ນ, ໃບຮຸ້ນກູ້, ພັນທະບັດ, ບັນຊີເງິນຝາກທະນາຄານ, ໝາກຜົນຂອງໂຄງການໃດໜຶ່ງທີ່ແນ່ນອນອາດຈະເກີດຂຶ້ນໃນອະນາຄົດ.....
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 362-366 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ; ມາດຕາ 1273-1296 ຂອງປະມວນກົດໝາຍແພ່ງເຢຍລະມັນ; ມາດຕາ 750-755 ປະມວນກົດໝາຍແພ່ງ ແລະ ພານິດໄທ.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 541 ການຈຳນຳດ້ວຍສິດທອງ

ການຈຳນຳດ້ວຍສິດທອງ ແມ່ນການຈຳນຳດ້ວຍ ບັນຊີເງິນຝາກທະນາຄານ, ໃບຮຸ້ນກູ້,ພັນທະບັດ, ສິດຕາມສັນຍາ, ໃບທອງໝີ້ ແລະ ສິດທອງອື່ນ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນວ່າການຈຳນຳດ້ວຍສິດທອງແມ່ນເປັນຄືແນວໃດພ້ອມທັງໃຫ້ຮູ້ວ່າສິດທອງໃດຈຶ່ງສາມາດຈຳນຳໄດ້.
ຕົວຢ່າງ	**ກ** ໄດ້ຢືມເງິນນຳ **ຂ** ຈຳນວນ 1.000.000 ກີບ ໂດຍໄດ້ນຳເອົາພັນທະບັດທີ່ຕົນໄດ້ຊື້ ຈຳນວນ 2.000.000 ກີບ ຊຶ່ງອອກໂດຍລັດຖະບານ ໄປໄວ້ນຳຜູ້ຮັບຈຳນຳ ເພື່ອຮັບປະກັນການໃຊ້ແທນໜີ້ສິນ ແລະ ການປະຕິບັດພັນທະຂອງຕົນ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ປັບປຸງມາຈາກຈາກມາດຕາ 11 ຂອງກົດໝາຍວ່າດ້ວຍການຄ້ຳປະກັນການປະຕິບັດສັນຍາ ປີ 2005 ໃນກົດໝາຍປັດຈຸບັນຜ່ານມາແມ່ນຍັງມີຄວາມສັບສົນ ແລະ ເຂົ້າໃຈຍາກຫຼາຍລະຫວ່າງເອກະສານຢັ້ງຢືນສິດ ແລະ ການຈຳນຳດ້ວຍສິດທອງ, ໃນມາດຕາ 15 ສິດທອງແມ່ນການກຳນົດເຖິງການຈຳນຳດ້ວຍສັງຫາຣິມະຊັບເປັນສ່ວນໃຫ່ຍ, ສ່ວນການຈຳນຳດ້ວຍສິດທອງນີ້ແມ່ນມີລັກສະນະແຕກຕ່າງເນື່ອງຈາກເປົ້າໝາຍຂອງສິດທອງນັ້ນແມ່ນເງິນ ສະນັ້ນເຫັນວ່າການກຳນົດໃນມາດຕານີ້ແມ່ນສາມາດກວມໄດ້ໃນທຸກໆສິດທອງທີ່ມີ ແລະ ສາມາດນຳເອົາເປັນຫຼັກຊັບຄ້ຳປະກັນໄດ້ເຊັນກັນ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 542 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 542 ການຈຳນຳດ້ວຍສິດອື່ນ

ການຈຳນຳດ້ວຍສິດອື່ນ ແມ່ນການຈຳນຳດ້ວຍ ໃບຮຸ້ນ, ຊັບສິນທາງປັນຍາ, ສິດໃນການດຳເນີນທຸລະກິດໃດໜຶ່ງ ແລະສິດອື່ນ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນໄດ້ວ່າສິດອື່ນທີ່ນອກເໜືອຈາກສິດທອງກໍສາມາດເປັນເປົ້າໝາຍຂອງການຈຳນຳໄດ້.
ຕົວຢ່າງ	**ກ** ເຮັດສັນຍາກູ້ຢືມເງິນ ຈຳນວນ 15.000.000 ກີບນຳ **ຂ** ໂດຍເອົາຮຸ້ນທີ່ຕົນຊື້ມານັ້ນເປັນຫຼັກຊັບຄ້ຳປະກັນການຈຳນຳສັນຍາກູ້ຢືມ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກມາດຕາ 11 ຂອງກົດໝາຍວ່າດ້ວຍການຄ້ຳປະກັນການປະຕິບັດສັນຍາ ປີ 2005ເນື່ອງຈາກວ່າເງື່ອນໄຂການຈຳນຳດ້ວຍສິດ ເປັນມາດຕາໃໝ່ ແລະ ເພື່ອໃຫ້ການຈັດຕັ້ງປະຕິບັດໄດ້ຮັບການຮັບປະກັນຕາມຫຼັກການຂອງການເຮັດເອກະສານທຸລະກຳໃດໜຶ່ງ ແລະ ເຮັດໃຫ້ສາມາດຮັບປະກັນໄດ້ສິດທິ ແລະ ປົກປ້ອງຜົນປະໂຫຍດຂອງເຈົ້າໜີ້.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄ້ວາ

ມາດຕາ 543 ການຈຳນຳດ້ວຍສິດຕໍ່ກົດຈະການໃດໜຶ່ງ ຫຼື ໝາກຜົນຂອງໂຄງການ

ການຈຳນຳດ້ວຍສິດຕໍ່ກົດຈະການໃດໜຶ່ງ ຫຼື ໝາກຜົນຂອງໂຄງການ ແມ່ນ ການຈຳນຳດ້ວຍສິດໃນການດຳເນີນກົດຈະການໃດໜຶ່ງ ຫຼື ທັງໝົດ ຂອງໂຄງການ ຫຼື ໝາກຜົນທີ່ຈະເກີດຂຶ້ນຈາກໂຄງການເຊັ່ນ ລາຍຮັບທີ່ຈະໄດ້ຮັບຈາກໂຄງການ, ຜົນຜະລິດກະສິກຳ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນວ່າສາມາດຈຳນຳດ້ວຍສິດຕໍ່ຜົນປະໂຫຍດທີ່ຈະເກີດຂຶ້ນ.
ຕົວຢ່າງ	**ກ** ເຮັດສັນຍາກູ້ຢືມເງິນ ຈຳນວນ 15.000.000 ກີບ ນຳ **ຂ** ໂດຍເອົາໂຄງການການປູກເຂົ້າຂຽວມາຈຳນຳ ຊຶ່ງອີງຕາມຄາດຄະເນແລ້ວ ເຂົ້າຂຽວສາມາດເກັບຜົນຜະລິດໄດ້ແນ່ນອນອີກພາຍໃນສາມເດືອນ ແລະ ມີລາຍຮັບປະມານ 30.000.000 ກີບ ມາເປັນຫຼັກຊັບຄ້ຳປະກັນການຈຳນຳ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 19 ຂອງກົດໝາຍວ່າດ້ວຍການຄ້ຳປະກັນການປະຕິບັດສັນຍາ ປີ 2005 ໂດຍໄດ້ຂຽນເນື້ອໃນໃຫ້ຈະແຈ້ງ ແລະ ສົມບູນຂຶ້ນກວ່າເກົ່າ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 540, 544 ແລະ 545 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 544 ເງື່ອນໄຂຂອງການຈຳນຳດ້ວຍສິດ

ການຈຳນຳດ້ວຍສິດ ປະກອບດ້ວຍເງື່ອນໄຂ ດັ່ງນີ້:

1. ມີສັນຍາໃຊ້ແທນໜີ້ສິນ ຫຼື ການປະຕິບັດພັນທະ;
2. ມີການຕົກລົງຈຳນຳ;
3. ເປັນກຳມະສິດຂອງຜູ້ຈຳນຳ;
4. ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນມາດຕາ401ຂອງປະມວນກົດໝາຍສະບັບນີ້ ຖ້າເປັນການຈຳນຳດ້ວຍສິດທວງ;
5. ຕ້ອງບັນທຶກການຈຳນຳໃສ່ທະບຽນຮຸ້ນຂອງບໍລິສັດທີ່ອອກຮຸ້ນເສຍກ່ອນ ຖ້າເປັນການຈຳນຳດ້ວຍ ໃບຮຸ້ນ ຫຼື ຮຸ້ນກູ້ລະບຸຊື່;
6. ຕ້ອງແມ່ນກິດຈະການ ຫຼື ໝາກຜົນຂອງໂຄງການ ທີ່ຈະເກີດຂຶ້ນໃນອະນາຄົດ ຖ້າເປັນການຈຳນຳດ້ວຍ ກິດຈະການໃດໜຶ່ງ ຫຼື ໝາກຜົນຂອງໂຄງການ.

ຈຸດປະສົງ	ເພື່ອກຳນົດໃຫ້ກ່ຽວກັບເງື່ອນໄຂຂອງການຈຳນຳດ້ວຍສິດ.
ຕົວຢ່າງ	**1. ກ** ເຮັດສັນຍາກູ້ຢືມເງິນນຳ **ຂ** ໂດຍມີຄວາມຕ້ອງການເອົາບັນຊີເງິນຝາກທະນາຄານເປັນຫຼັກຊັບຄ້ຳປະກັນ ສະນັ້ນ ໃນສັນຍາກູ້ຢືມນັ້ນ ອາດຈະເຮັດເປັນສະບັບດຽວໂດຍການກຳນົດໃນສັນຍາວ່າມີການຄ້ຳປະກັນການຈຳນຳດ້ວຍສິດທີ່ເປັນບັນຊີເງິນຝາກທະນາຄານ ຫຼື ສາມາດເຮັດເປັນສັນຍາຄ້ຳປະກັນການຈຳນຳສະເພາະກໍໄດ້ ໝາຍວ່າ ອາດເປັນສອງສະບັບ ຫຼື ສະບັບດຽວກໍໄດ້; **2.** ປຶ້ມບັນຊີເງິນຝາກທະນາຄານທີ່ ນຳມາຈຳນຳນັ້ນ ແມ່ນຕ້ອງອອກຊື່ບັນຊີເປັນເງິນຝາກຂອງ**ກ** ແລະ ເປັນກຳມະສິດຂອງລາວແທ້; **3.** ຕາມມາດຕາ 401 ຂອງປະມວນກົດໝາຍແພ່ງສະບັບນີ້ກຳນົດກ່ຽວກັບການປ່ຽນເຈົ້າໜີ້ ໝາຍຄວາມວ່າເຈົ້າໜີ້ສາມາດ ມອບໂອນສິດທີ່ມີໃນສັນຍານັ້ນໃຫ້ເຈົ້າໜີ້ຜູ້ໃໝ່ໄດ້ ຖ້າບໍ່ຂັດກັບກົດໝາຍ ຫຼື ສັນຍາ ເຊັ່ນ **ກ** ກູ້ຢືມເງິນນຳ **ສ** ເປັນ

	ຈຳນວນ 5.000.000ກີບ ໂດຍນຳເອົາພັນທະບັດທີ່ອອກໂດຍລັດຖະບານ ມາເປັນຫຼັກຊັບໃນການຄ້ຳປະກັນໃນການຈຳນຳດ້ວຍສິດ ໃນສັນຍາກຳບໍ່ໄດ້ກຳນົດເຖິງເງື່ອນໄຂໃດໆ, ຕໍ່ມາ **ສ** ໄດ້ ນຳເອົາພັນທະບັດ ໄປເປັນຫຼັກຊັບໃນການຄ້ຳປະກັນການກູ້ຍືມເງິນຕື່ມອີກກັບ **ຍ**, ຊຶ່ງໃນນີ້ຕາມມາດຕາ 401 (ການປ່ຽນເຈົ້າໜີ້) ເຫັນວ່າ **ສ** ແມ່ນຕ້ອງໄດ້ມອບເອກະສານຍັ້ງຍືນການທວງຄືນພັນທະບັດ ຂອງ **ກ** ໃນເບື້ອງຕົ້ນນັ້ນໃຫ້ **ຍ** (ເຈົ້າໜີ້ຄົນໃໝ່) ຈຶ່ງຖືວ່າສັນຍາລະຫວ່າງ **ສ** ແລະ **ຍ** ສາມາດນຳໃຊ້ໄດ້ ແລະ ມີຜົນສັກສິດພາຍຫຼັງມອບເອກະສານເປັນຕົ້ນໄປ. **4.** ຖ້າເອົາໃບຮຸ້ນ ຫຼື ຕົວຢ່າງ: **ຂ** ກູ້ຍືມເງິນນຳ **ຣ** ໂດຍໄດ້ນຳເອົາໃບຮຸ້ນ (ຂອງບໍລິສັດ **ສ** ຈຳກັດ) ໄປຄ້ຳປະກັນ ການຈຳນຳການໃຊ້ແທນໜີ້ສິນ, ໃນກໍລະນີນີ້ **ຂ** ຕ້ອງໄດ້ນຳເອົາໃບຮຸ້ນທີ່ຈະເອົາໄປຈຳນຳນັ້ນໄປຈົດທະບຽນຍັ້ງຍືນການຈຳນຳ ກັບບໍລິສັດ **ສ** ຈຳກັດ ກ່ອນ ຈຶ່ງສາມາດນຳໄປເຮັດການຈຳນຳໄດ້. **5.**ຖ້າເປັນຊັບ ຫຼື ໝາກຜົນຂອງໂຄງການ.....ຕົວຢ່າງ **ກ** ໄດ້ກູ້ຍືມເງິນຈຳນວນ 5.000.000 ກີບ ກັບ **ຂ** ໂດຍເອົາເຂົ້າຂຽວທີ່ປູກຢູ່ທົ່ງນາ ມາເປັນຫຼັກຊັບຄ້ຳປະກັນການຈຳນຳ ຊຶ່ງຄາດແນ່ວ່າ ອີກສາມເດືອນສາມາດເກັບກ່ຽວຜົນຜະລິດໄດ້ຢ່າງແນ່ນອນ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກມາດຕາ 15 ແລະ 16 ຂອງກົດໝາຍວ່າດ້ວຍການຄ້ຳປະກັນການປະຕິບັດສັນຍາ ປີ 2005.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 753 ຂອງປະມວນກົດໝາຍແພ່ງແລະພານິດໄທ.
ມາດຕາອ້າງອີງ	ມາດຕາ 401 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 545 ຜົນຂອງການຈຳນຳດ້ວຍສິດ

ຜົນຂອງການຈຳນຳດ້ວຍສິດ ມີດັ່ງນີ້:

1. ຜູ້ຮັບຈຳນຳມີບຸລິມະສິດໃນການໃຊ້ແທນໜີ້ສິນ ກ່ອນເຈົ້າໜີ້ຄົນອື່ນ ຖ້າຫາກສິດທີ່ເອົາໄປຈຳນຳນັ້ນຍັງຢູ່ໃນການຄອບຄອງຂອງຜູ້ຮັບຈຳນຳ;
2. ຜູ້ຮັບຈຳນຳອາດຮຽກເກັບໜີ້ ໂດຍກົງ;
3. ຜູ້ຮັບຈຳນຳອາດໄດ້ຮັບການຊຳລະ ໃນຈຳນວນຕາມອັດຕາສ່ວນຂອງໜີ້ທີ່ຕົນມີສິດທວງເທົ່ານັ້ນຖ້າສິດທວງນັ້ນຫາກເປັນເງິນ;
4. ຜູ້ຮັບຈຳນຳມີສິດທວງໃຫ້ລູກໜີ້ຂອງຜູ້ຈຳນຳ ເອົາເງິນທີ່ຕ້ອງຊຳລະ ມາໄວ້ໃນການຄອບຄອງ ແລະ ປົກປັກຮັກສາຂອງຜູ້ຮັບຈຳນຳຫຼືບຸກຄົນອື່ນ ຕາມການຕົກລົງ ຖ້າສິດທີ່ນຳມາຈຳນຳກັບຜູ້ຮັບຈຳນຳນັ້ນຫາກສິ້ນສຸດກ່ອນກຳນົດເວລາ.

ການຈຳນຳດ້ວຍສິດສາມາດນຳໃຊ້ຂໍ້ກຳນົດຕາມທີ່ໄດ້ກຳນົດໄວ້ໃນມາດຕາ 531ວັກທີສີ່ຂອງປະມວນກົດໝາຍສະບັບນີ້.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນວິທີການນຳໃຊ້ສິດຕໍ່ການຈຳນຳ (ສິດຂອງຜູ້ຮັບຈຳນຳ) ເພື່ອເປັນບຸລິມະສິດໃນການເກັບກູ້ໜີ້ສິນກໍລະນີທີ່ລູກໜີ້ບໍ່ປະຕິບັດພັນທະໜີ້ສິນ.
ຕົວຢ່າງ	**1.** ສິດທິຕ່າງໆທີ່ນຳໄປຈຳນຳນັ້ນເຊັນໃບພັນທະບັດແມ່ນເຈົ້າໜີ້ ຫຼື ຜູ້ຮັບຈຳນຳເປັນຜູ້ຄອບຄອງເປັນຜູ້ເກັບຮັກສາໄວ້ ແລະ ຖ້າກໍລະນີມີເຈົ້າໜີ້ຫຼາຍຄົນເຊັນມີເຈົ້າໜີ້ **ກ**, **ຂ** ແລະ **ຄ** (**ຂ** ແມ່ນເປັນຜູ້ ຄອບຄອງໃບພັນທະບັດນັ້ນ) ໝາຍຄວາມວ່າ **ຂ** ແມ່ນເປັນຜູ້ທີ່ມີສິດໄດ້ຮັບການໃຊ້ແທນໜີ້ສິນກ່ອນຜູ້ອື່ນໆ.

	2. ກ ເອົາພັນທະບັດໄປຄ້ຳປະກັນການໃຊ້ແທນໜີ້ສິນ ກັບ **ຂ** ແຕ່ເຖິງກຳນົດເວລາ **ກ** ຫາກບໍ່ມາໄຖ່ຖອນເອົາຄືນໃບພັນທະບັດນັ້ນຕາມກຳນົດເວລາ ໃນກໍລະນີດັ່ງກ່າວ ຜູ້ຮັບຈຳນຳສາມາດນຳເອົາໃບພັນທະບັດໄປຮຽກເກັບນຳພາກສ່ວນທີ່ອອກພັນທະບັດນັ້ນໄດ້ໂດຍກົງ. **3.** ຜູ້ຮັບຈຳນຳອາດໄດ້ຮັບການຊຳລະໃນຈຳນວນຕາມອັດຕາສ່ວນຂອງໜີ້ທີ່ຕົນມີສິດທອງເທົ່ານັ້ນ ຖ້າສິດທອງນັ້ນຫາກເປັນເງິນ **ກ** ເອົາໃບເກັບທ່ອງໜີ້ທີ່ຈະໄດ້ຮັບຈາກການຂາຍປາໃນຟາມຈຳນວນ 15.000.000 ກີບໄປຈຳນຳເອົາເງິນນຳ **ຂ** ໃນຈຳນວນ 10.000.000 ກີບ, ເມື່ອເຖິງກຳນົດເວລາການໃຊ້ແທນໜີ້ສິນໃນກໍລະນີຂໍ້ສາມນີ້ **ຂ** ສາມາດເອົາໃບທອງໜີ້ໄປທອງໄດ້ໂດຍອີງສິດທອງທີ່ຕົນມີຕາມສັນຍາການກູ້ຢືມເງິນທີ່ມີການຈຳນຳໃບທອງໜີ້ໃນຈຳນວນສິບລ້ານກີບເທົ່ານັ້ນ ແລະ **ຂ** ຈະໄດ້ຮັບຕາມອັດຕາສ່ວນນີ້ເທົ່ານັ້ນເນື່ອງຈາກສິດທອງດັ່ງກ່າວແມ່ນເປັນເງິນ. ໝາຍຄວາມວ່າບໍ່ສາມາດທອງເກີນຈຳນວນໜີ້ສິນທີ່ມີ. **4.** ໃນກໍລະນີນີ້ ຖ້າຫາກວາເອົາໃບຮຽກເກັບໜີ້ສິນມາຈຳນຳ ໃນວັນທີ 1/1/2001 ພາຍໃນກຳນົດຫົກເດືອນ ຄື ຮອດ 2/6/2001 ໝົດອາຍຸສັນຍາ ແຕ່ວ່າໃນໃບຮຽກເກັບໜີ້ແມ່ນສາມາດຮຽກເກັບໄດ້ໃນວັນທີ 1/5/2001 ສະນັ້ນ ໃນກໍລະນີ ດັ່ງກ່າວຕ້ອງມີການຕົກລົງໃນສັນຍາວ່າ ຈະເອົາເງິນທີ່ຮຽກເກັບໄດ້ກ່ອນນັ້ນໄວ້ນຳໃຜ ອາດແມ່ນບຸກຄົນອື່ນ ຫຼື ຜູ້ຮັບຈຳນຳບໍ່ ແລ້ວແຕ່ການຕົກລົງ ກໍລະນີຮອດກຳນົດເວລາແລ້ວໃນການໃຊ້ແທນໜີ້ ຕ້ອງໄດ້ເອົາເງິນທີ່ເກັບໜີ້ໄດ້ກ່ອນນັ້ນ ມາໃຊ້ແທນຖ້າລູກໜີ້ບໍ່ສາມາດໃຊ້ໄດ້ຕາມຈຳນວນໜີ້ສິນ ຖ້າເງິນເຫຼືອ ກໍຕ້ອງໄດ້ສົ່ງຄືນລູກໜີ້ ແຕ່ຖ້າບໍ່ພໍລູກໜີ້ກໍຕ້ອງໄດ້ຕື່ມໃສ່ເພື່ອໃຊ້ແທນ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 15 ແລະ 16 ຂອງກົດໝາຍວ່າດ້ວຍການຄ້ຳປະກັນການປະຕິບັດສັນຍາ ປີ 2005 ເນື່ອງຈາກວ່າຜົນຂອງການຈຳນຳສິດ ເປັນມາດຕາໃໝ່ ແລະ ເພື່ອໃຫ້ການຈັດຕັ້ງປະຕິບັດສັນຍາຈຳນຳສາມາດຮັບປະກັນໄດ້ສິດທິ ແລະ ປົກປ້ອງຜົນປະ�โยດຂອງເຈົ້າໜີ້ ແລະ ຮັບປະກັນການແກ້ໄຂຂໍ້ຂັດແຍ່ງທີ່ເກີດຂຶ້ນລະຫວ່າງເຈົ້າໜີ້, ລູກໜີ້ ແລະ ບຸກຄົນອື່ນທີ່ກ່ຽວພັນເພາະຕາມຫຼັກການຂອງການຄ້ຳປະກັນດ້ວຍການຈຳນຳສັງຫາຣິມະຊັບ ຊັບຄ້ຳຢູ່ນຳໃຜ ແນ່ນອນເຈົ້າໜີ້ຜູ້ນັ້ນກໍມີບູລິມະສິດໃນການໃຊ້ແທນໜີ້ສິນ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 754 ຂອງປະມວນກົດໝາຍແພ່ງແລະ ພານິດໄທ.
ມາດຕາອ້າງອີງ	ມາດຕາ 531 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ຂ. ການຈຳນອງ

ມາດຕາ 546ການຈຳນອງ.

ການຈຳນອງ ແມ່ນການຮັບປະກັນການໃຊ້ແທນໜີ້ສິນ ຫຼື ການປະຕິບັດພັນທະອື່ນແກ່ເຈົ້າໜີ້ ດ້ວຍການຈົດທະບຽນຊັບທີ່ນຳມາຈຳນອງ ໂດຍບໍ່ໄດ້ມອບຊັບສິ່ງຂອງດັ່ງກ່າວໃຫ້ຢູ່ໃນການຄອບຄອງຂອງຜູ້ຮັບຈຳນອງ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ຄວາມໝາຍໃນການໃຊ້ແທນໜີ້ສິນ ຫຼື ປະຕິບັດພັນທະອື່ນແກ່ເຈົ້າໜີ້ ໂດຍບໍ່ໄດ້ມອບຊັບທີ່ຈຳນອງນັ້ນໄວ້ນຳເຈົ້າໜີ້ ແຕ່ຕ້ອງຈົດທະບຽນຄ້ຳປະກັນ.

ຕົວຢ່າງ	**1. ກ** ໄດ້ກູ້ຢືມເງິນນຳ **ຂ**, ຈຳນວນ10.000.000 ກີບໂດຍກໄດ້ເອົາທີ່ດິນຂອງຕົນ 1 ຕອນ, ຕາມໃບຕາດິນເລກທີ 001, ລົງວັນທີ 1 ມັງກອນ 2011 ອອກຊື່ກ ໄດ້ນຳເອົາສັນຍາກູ້ຢືມ ແລະ ສັນຍາຈຳນອງ ໄປຈົດທະບຽນການຈຳນອງນຳກັບພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເພື່ອການຮັບປະກັນການໃຊ້ແທນໜີ້ສິນໂດຍກບໍ່ຈຳເປັນສົ່ງມອບທີ່ດິນຂອງຕົນໃຫ້ **ຂ**, **ກ** ຍັງມີສິດຄອບຄອງ, ນຳໃຊ້ ແລະ ໄດ້ຮັບໝາກຜົນ ທີ່ດິນຂອງຕົນຄືເກົ່າ. **2. ຂ** ໄດ້ກູ້ຢືມເງິນນຳ **ຄ** ຈຳນວນ 5.000.000 ກີບ, ໂດຍ **ຂ** ໄດ້ເອົາທະບຽນລົດຈັກໝາຍເລກທະບຽນ ກກ 0000 ໄປຈຳນອງເພື່ອຮັບປະກັນໃນການໃຊ້ແທນໜີ້ສິນດ້ວຍການນຳເອົາສັນຍາຈຳນອງນັ້ນໄປຈົດທະບຽນນຳຂະແໜງການເງິນສ່ວນລົດຄັນດັ່ງກ່າວແມ່ນ **ຂ** ມີສິດຄອບຄອງນຳໃຊ້.
ເຫດຜົນໃນການປັບປຸງ	ມາດຕານີ້ໄດ້ປັບປຸງມາຈາກມາດຕາ 20 ຂອງກົດໝາຍວ່າດ້ວຍການຄ້ຳປະກັນການປະຕິບັດສັນຍາ ປີ 2005 ໂດຍປ່ຽນຄຳສັບຈາກການຄ້ຳປະກັນດ້ວຍອະສັງຫາລິມະຊັບມາເປັນການຈຳນອງອີງຕາມມາດຕາ 20 ຂອງກົດໝາຍວ່າດ້ວຍການຄ້ຳປະກັນການປະຕິບັດສັນຍາ ການຄ້ຳປະກັນດ້ວຍອະສັງຫາລິມະຊັບມາເປັນການຈຳນອງ. ເພື່ອໃຫ້ຮູ້ໄດ້ວ່າການຈຳນອງສາມາດເຮັດໄດ້ທັງສັງຫາລິມະຊັບ ແລະ ອະສັງຫາລິມະຊັບສິ່ງສຳຄັນທຸກໆການຈຳນອງຕ້ອງມີການຈົດທະບຽນຊັບທີ່ນຳໄປຈຳນອງ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 702 ຂອງປະມວນກົດໝາຍແພ່ງແລະພານິດໄທ; ມາດຕາ 369 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ; ມາດຕາ 317 ຂອງປະມວນກົດໝາຍຫວຽດນາມ ປີ 2015.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນ ຫຼື ປະເພນີສານ	ເປັນການຈົດທະບຽນຈຳນອງໂດຍຜູ້ຈຳນອງບໍ່ຈຳເປັນຕ້ອງສົ່ງມອບຊັບທີ່ຈຳນອງໃຫ້ແກ່ຜູ້ຮັບຈຳນອງ.

ມາດຕາ 547ປະເພດການຈຳນອງ

ການຈຳນອງ ມີສອງປະເພດດັ່ງນີ້:

1. ການຈຳນອງດ້ວຍອະສັງຫາລິມະຊັບ;
2. ການຈຳນອງດ້ວຍສັງຫາລິມະຊັບ.

ຈຸດປະສົງ	ເພື່ອກຳນົດປະເພດຊັບທີສາມາດນຳມາຈຳນອງເຮັດໄດ້ທັງປະເພດສັງຫາລິມະຊັບ ແລະ ອະສັງຫາລິມະຊັບ.
ຕົວຢ່າງ	ໃຫ້ເບິ່ງຕົວຢ່າງມາດຕາ 546 ການຈຳນອງ
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງໃໝ່ເພື່ອຄວາມອຳນວຍຄວາມສະດວກໃນການຄ້ຳປະກັນການໃຊ້ແທນໜີ້ສິນເຊິ່ງຜູ້ຄ້ຳປະກັນສາມາດນຳໃຊ້ທາງເລືອກໃນຮູບແບບການຈຳນອງ ແລະ ຮັບຈຳນອງດ້ວຍສັງຫາລິມະຊັບເນື່ອງຈາກກົດໝາຍວ່າດ້ວຍການຄ້ຳປະກັນ ປີ 2005 ຍັງບໍ່ໄດ້ກຳນົດການຈຳນອງດ້ວຍອະສັງຫາລິມະຊັບ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 548 ແລະ 555 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ຂ1. ການຈຳນອງດ້ວຍອະສັງຫາລິມະຊັບ

ມາດຕາ548 ການຈຳນອງດ້ວຍອະສັງຫາລິມະຊັບ

ການຈຳນອງດ້ວຍອະສັງຫາລິມະຊັບ ແມ່ນການຮັບປະກັນການໃຊ້ແທນໜີ້ສິນ ຫຼື ການປະຕິບັດພັນທະອື່ນ ແກ່ເຈົ້າໜີ້ດ້ວຍການຈົດທະບຽນອະສັງຫາລິມະຊັບທີ່ນຳໄປຈຳນອງ ໂດຍບໍ່ໄດ້ມອບອະສັງຫາລິມະຊັບດັ່ງກ່າວ ໃຫ້ຢູ່ໃນການຄອບຄອງຂອງຜູ້ຮັບຈຳນອງ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນຄວາມໝາຍຂອງການຈຳນອງດ້ວຍອະສັງຫາລິມະຊັບ ໃນການໃຊ້ແທນໜີ້ສິນ ຫຼື ປະຕິບັດພັນທະອື່ນ ແກ່ເຈົ້າໜີ້ ໂດຍບໍ່ໄດ້ເອົາອະສັງຫາລິມະຊັບໄວ້ນຳເຈົ້າໜີ້ ແຕ່ຕ້ອງໄດ້ນຳຊັບດັ່ງກ່າວໄປຈົດທະບຽນ.
ຕົວຢ່າງ	**ກ** ໄດ້ກູ້ຢືມເງິນນຳ **ຂ** ຈຳນວນ 10.000.000 ກີບ ໂດຍ **ກ** ໄດ້ເອົາທີ່ດິນຂອງຕົນເອງໜຶ່ງຕອນ ຕາມໃບຕາດິນເລກທີ 001, ລົງວັນທີ 1 ມັງກອນ 2011 ອອກຊື່ **ກ** ໄດ້ນຳເອົາສັນຍາກູ້ຢືມ ແລະ ສັນຍາຈຳນອງ ໄປຈົດທະບຽນຈຳນອງກັບພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເພື່ອເປັນການຮັບປະກັນໃນການໃຊ້ແທນໜີ້ສິນ **ກ** ບໍ່ຈຳ ເປັນສິ່ງມອບທີ່ດິນຂອງຕົນໃຫ້ **ຂ**, ແຕ່ **ກ** ຍັງມີສິດຄອບຄອງ ແລະ ນຳໃຊ້ທີ່ດິນຂອງຕົນຄືເກົ່າ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 20 ຂອງກົດໝາຍວ່າດ້ວຍການຄ້ຳປະກັນການປະຕິບັດສັນຍາ ປີ 2005ເຫດຜົນປັບປຸງຍ້ອນແຍກອອກໃຫ້ຈະແຈ້ງໂດຍປ່ຽນຈາກຄຳວ່າການຄ້ຳປະກັນດ້ວຍອະສັງຫາລິມະຊັບ ມາເປັນການຈຳນອງ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ702 ຂອງປະມວນກົດໝາຍແພ່ງ ແລະ ພານິດໄທ; ມາດຕາ 369 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ; ມາດຕາ 843 ຂອງປະມວນກົດໝາຍແພ່ງກຳປູເຈຍ; ມາດຕາ 2085 ແລະ 2091 ຂອງປະມວນກົດໝາຍຝຣັ່ງ.
ມາດຕາອ້າງອີງ	ມາດຕາ 549 ແລະ 551 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ549 ເງື່ອນໄຂຂອງການຈຳນອງດ້ວຍອະສັງຫາລິມະຊັບ

ການຈຳນອງດ້ວຍອະສັງຫາລິມະຊັບ ຕ້ອງປະຕິບັດຕາມເງື່ອນໄຂ ດັ່ງນີ້:

1. ມີສັນຍາໃຊ້ແທນໜີ້ສິນ ຫຼື ການປະຕິບັດພັນທະອື່ນ;
2. ມີການຕົກລົງຈຳນອງ;
3. ອະສັງຫາລິມະຊັບທີ່ນຳມາຈຳນອງບໍ່ຢູ່ໃນການຄອບຄອງຂອງຜູ້ຮັບຈຳນອງ;
4. ອະສັງຫາລິມະຊັບທີ່ນຳມາຈຳນອງຕ້ອງເປັນກຳມະສິດຂອງຜູ້ຈຳນອງ;
5. ຕ້ອງເຮັດເປັນລາຍລັກອັກສອນ ແລະ ຈົດທະບຽນນຳຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຫຼື ພາກສ່ວນກ່ຽວຂ້ອງອື່ນຂອງລັດ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ ແລະ ສາມາດເຂົ້າໃຈເຖິງເງື່ອນໄຂຂອງການຈຳນອງດ້ວຍອະສັງຫາລິມະຊັບ.
ຕົວຢ່າງ	**1. ກ** ແລະ **ຂ** ໄດ້ຕົກລົງເຮັດສັນຍາກູ້ຢືມເງິນນຳກັນ ຈຳນວນ 10.000.000 ກີບ ໂດຍ **ຂ** ໄດ້ເອົາໃບຕາດິນທີ່ອອກຊື່ຕົນເອງມາຈຳນອງເພື່ອເປັນຫຼັກຊັບຮັບປະກັນໃນການໃຊ້ແທນໜີ້ສິນໃຫ້ແກ່ **ກ** ສັນຍາຈຳນອງດັ່ງກ່າວ ໄດ້ນຳໄປຈົດທະບຽນຢູ່ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຊັບທີ່ນຳໄປຄ້ຳປະກັນນັ້ນ **ຂ** ຍັງມີສິດຄອບຄອງ ແລະ ໄດ້ຮັບໝາກຜົນ.

	2. ກ ແລະ **ຂ** ໄດ້ຕົກລົງເຮັດສັນຍາກູ້ຢືມເງິນນຳກັນ ຈຳນວນ 10.000.000 ກີບ ໂດຍ **ຄ** ຜູ້ເປັນເຈົ້າຂອງໃບຕາດິນ ໄດ້ນຳເອົາໃບຕາດິນດັ່ງກ່າວໄປຈຳນອງກັບ **ກ** ເພື່ອຮັບປະກັນໃນການໃຊ້ແທນໜີ້ສິນຄືນແກ່ **ກ** (ມາດຕາ 520 ວັກ 3 ຂອງປະມວນກົດໝາຍແພ່ງ) ສັນຍາຈຳນອງດັ່ງກ່າວ ໄດ້ນຳໄປຈົດທະບຽນຢູ່ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຊັບທີ່ນຳໄປຄ້ຳປະກັນນັ້ນ **ຄ** ຍັງມີສິດຄອບຄອງ, ນຳໃຊ້ ແລະ ໄດ້ຮັບໝາກຜົນ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ໄດ້ສ້າງໃໝ່ ຍ້ອນວ່າກົດໝາຍຄ້ຳປະກັນການປະຕິບັດສັນຍາປີ 2005 ບໍ່ໄດ້ກຳນົດຢ່າງລະອຽດກ່ຽວກັບເງື່ອນໄຂຂອງການເອົາຊັບໄປຈຳນອງ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 520 ວັກ 3 ຂອງປະມວນກົດໝາຍແພ່ງ (ໃນຕົວຢ່າງທີ 2).
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 550 ຜົນຂອງການຈຳນອງດ້ວຍອະສັງຫາລິມະຊັບ

ອະສັງຫາລິມະຊັບທີ່ນຳມາຈຳນອງ ຍັງເປັນກຳມະສິດຂອງຜູ້ຈຳນອງ ຊຶ່ງຜູ້ກ່ຽວຍັງມີສິດຄອບຄອງ, ນຳໃຊ້ ແລະ ໄດ້ຮັບໝາກຜົນ ຈາກຊັບທີ່ໄດ້ຈົດທະບຽນການຈຳນອງ.

ຜູ້ຈຳນອງຕ້ອງປົກປັກຮັກສາຊັບທີ່ນຳໄປຈຳນອງນັ້ນໃຫ້ຢູ່ໃນສະພາບເດີມແລະບໍ່ເຮັດໃຫ້ມູນຄ່າຂອງຊັບນັ້ນຫຼຸດລົງ. ຖ້າຊັບທີ່ນຳໄປຈຳນອງນັ້ນ ຫາກມີການສ້ອມແປງ, ປັບປຸງ ຫຼື ເພີ່ມເຕີມ ກໍໃຫ້ນັບເຂົ້າໃນມູນຄ່າຂອງຊັບດັ່ງກ່າວ.

ຜູ້ຈຳນອງ ບໍ່ມີສິດຂາຍ, ມອບ ຫຼື ແລກປ່ຽນອະສັງຫາລິມະຊັບ ທີ່ນຳໄປຈຳນອງນັ້ນ. ຖ້າຫາກມີການລະເມີດ ຜູ້ຮັບຈຳນອງມີສິດທວງ, ຕິດຕາມເອົາຊັບນັ້ນຄືນ. ສຳລັບຄ່າໃຊ້ຈ່າຍໃນການທວງ, ຕິດຕາມເອົາອະສັງຫາລິມະຊັບນັ້ນຄືນ ລວມທັງຄ່າເສຍຫາຍທີ່ເກີດຂຶ້ນຈາກການລະເມີດນັ້ນ ແມ່ນຄວາມຮັບຜິດຊອບຂອງຜູ້ຈຳນອງ.

ເມື່ອຜູ້ຈຳນອງ ຫາກໄດ້ປະຕິບັດພັນທະຄົບຖ້ວນແລ້ວ ການຈຳນອງກໍຈະສິ້ນສຸດລົງ ແລະ ການຈົດທະບຽນການຈຳນອງຈະຖືກລົບລ້າງ.

ຜູ້ທີ່ເຫັນດີເອົາອະສັງຫາລິມະຊັບຂອງຕົນໄປໃຫ້ຈຳນອງແລະໄດ້ໃຊ້ແທນໜີ້ສິນ ຫຼືປະຕິບັດພັນທະແທນລູກໜີ້ດ້ວຍຊັບ ມີສິດໄດ້ຮັບການທົດແທນຄືນຈາກລູກໜີ້ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 558ວັກທີສີ່ຂອງປະມວນກົດໝາຍສະບັບນີ້.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນກ່ຽວກັບຜົນຂອງການຈຳນອງດ້ວຍອະສັງຫາລິມະຊັບເຊັ່ນ: ການຄຸ້ມຄອງອະສັງຫາລິມະຊັບທີ່ເປັນເປົ້າໝາຍ, ການສົ່ງອະສັງຫາລິມະຊັບຄືນເມື່ອປະຕິບັດພັດທະໜີ້ສິນຄົບຖ້ວນ, ລວມທັງການໃຊ້ແທນໜີ້ສິນແທນລູກໜີ້ ໂດຍຜູ້ຈຳນອງເພື່ອໜີ້ສິນຂອງບຸກຄົນອື່ນ (ລູກໜີ້), ສິດໃນການທວງເອົາເງິນຄືນຈາກລູກໜີ້ ໃນກໍລະນີທີ່ໄດ້ເສັຍສິດຕໍ່ອະສັງຫາລິມະຊັບ ຍ້ອນມີການນຳໃຊ້ສິດຕໍ່ການຈຳນອງ.
ຕົວຢ່າງ	**1. ກ** ໄດ້ກູ້ຢືມເງິນຈຳນວນ 100.000.000 ກີບ ນຳ **ຂ** ກຳນົດເວລາ 2 ປີ, ໂດຍເອົາທີ່ດິນນາມີເນື້ອທີ່ 3 ໄລ່ ຄິດໄລ່ ມູນຄ່າ ຈຳນວນ 300.000.000 ກີບ ຂອງຕົນໄປຄ້ຳປະກັນການໃຊ້ແທນໜີ້ສິນ ແລະ ຈົດທະບຽນການຈຳນອງນຳພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ,**ກ** ຍັງຄອບຄອງນຳໃຊ້ ແລະ ໄດ້ຮັບໝາກຜົນ ຊັບທີ່ນຳມາຈຳນອງນັ້ນ, ນອກຈາກນັ້ນ ຍັງມີສິດປົກປັກຮັກສາຊັບໃຫ້ຢູ່ໃນສະພາບເດີມ ໂດຍບໍ່ເຮັດໃຫ້ດິນນາເສື່ອມໂຊມ ຫຼືຫຼຸດມູນຄ່າຂອງດິນນາ ໃນກໍລະນີ **ກ** ໄດ້ຖົມດິນນາ 1 ໄລ່ ເພື່ອມາປຸກສ້າງເຮືອນວິນລາສອງຊັ້ນໜຶ່ງຫຼັງ ມູນຄ່າການປຸກສ້າງ 200.000.000 ກີບ (ມູນຄ່າຂອງການປຸກສ້າງໃຫ້ຄິດໄລ່ໃສ່ມູນຄ່າຂອງດິນ) **ກ** ຜູ້ຈຳນອງ (ລູກໜີ້) ບໍ່ມີສິດຂາຍ,

	ມອບ ຫຼື ແລກປ່ຽນທີ່ດິນນາດັ່ງກ່າວໃຫ້ແກ່ບຸກຄົນອື່ນຖ້າຫາກລະເມີດ **ຂ** ມີສິດທວງ ຫຼື ຕິດຕາມເອົາຊັບນັ້ນຄືນ ສ່ວນຄ່າໃຊ້ຈ່າຍໃນການທວງ ຫຼື ຕິດຕາມຊັບຄືນນັ້ນແມ່ນ **ກ** ເປັນຜູ້ຮັບຜິດຊອບ. **2.**(ວັກ5) **ຄ**ໄດ້ນຳເອົາດິນນາໜຶ່ງຕອນທີອອກເປັນຊື່ **ຄ**ໄປຈຳນອງເພື່ອຮັບປະກັນໃນການໃຊ້ແທນໜີ້ສິນທີ່ເປັນຂອງ **ກ** ຈຳນວນ 200.000.000 ກີບ ໃຫ້ແກ່ **ຂ** ເມື່ອຮອດກຳນົດເວລາໃຊ້ແທນໜີ້ສິນແລ້ວ **ກ** ບໍ່ມີຄວາມສາມາດໃຊ້ແທນໜີ້ສິນໃຫ້ແກ່ **ຂ**, **ຄ** ຈຶ່ງໄດ້ເອົາທີ່ດິນນາຂອງ **ຄ**ໄປປະກາດຂາຍເພື່ອໃຊ້ແທນໜີ້ສິນໃຫ້ກັບ **ກ** ໃນກໍລະນີດັ່ງກ່າວ **ຄ** ມີສິດທວງເອົາການທົດແທນຄືນນຳ **ກ** ໝາຍຄວາມວ່າ **ຄ** ຈະເປັນເຈົ້າໜີ້ຄົນໃໝ່ຂອງ **ກ**. **3. ກ** ໄດ້ກູ້ຍືມເງິນນຳ **ຂ**,**ຄ** ແລະ **ງ** ຊຶ່ງ **ກ** ໄດ້ມີທີ່ດິນນາໜຶ່ງຕອນເປັນການຄ້ຳປະກັນໜີ້ສິນແກ່ **ຂ**,**ຄ** ແລະ **ງ**, ສ່ວນ **ງ** ຜູ້ທີ່ສາມແມ່ນໄດ້ໄປຈົດທະບຽນການຈຳນອງຕໍ່ທີ່ດິນຕອນດັ່ງກ່າວໃນເວລາທີ່ກບໍ່ສາມາດໃຊ້ແທນໜີ້ສິນໄດ້ **ງ** ແມ່ນມີບຸລິມະສິດເໜືອກ່ອນ **ຂ** ແລະ **ຄ**.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 14, 15, 23, 24 ແລະ 25 ຂອງກົດໝາຍວ່າດ້ວຍການຄ້ຳປະກັນການປະຕິບັດສັນຍາ ປີ 2005 ໂດຍລວມເອົາບັນດາມາດຕາດັ່ງກ່າວເຂົ້າກັນ ແລະ ເພີ່ມສິດໃຫ້ແກ່ ຜູ້ຈຳນອງ ໃນການທວງໜີ້ສິນຈາກລູກໜີ້ ກໍລະນີຜູ້ຈຳນອງໄດ້ເອົາອະສັງຫາລິມະຊັບ ຂອງຕົນໃຊ້ແທນໜີ້ສິນແທນລູກໜີ້.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 322, 323 ແລະ 324 ຂອງປະມວນກົດໝາຍແພ່ງຂອງ ຫວຽດນາມ ປີ 2015.
ມາດຕາອ້າງອີງ	ມາດຕາ 551, 554 ແລະ 555 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ551 ສິດຂອງຜູ້ຮັບຈຳນອງຕໍ່ອະສັງຫາລິມະຊັບທີ່ນຳມາຈຳນອງ

ຖ້າລູກໜີ້ ຫາກບໍ່ໃຊ້ແທນໜີ້ສິນຕາມກຳນົດເວລາ, ຜູ້ຮັບຈຳນອງ ມີສິດປະກາດຂາຍ ຫຼື ປະມູນຂາຍອະສັງຫາລິມະຊັບທີ່ນຳມາຈຳນອງນັ້ນເພື່ອໃຊ້ແທນໜີ້ສິນພ້ອມທັງດອກເບ້ຍຫຼືປະຕິບັດພັນທະອື່ນໃຫ້ຕົນ.

ຜູ້ຮັບຈຳນອງ ມີບຸລິມະສິດໄດ້ຮັບການໃຊ້ແທນໜີ້ສິນກ່ອນ ເຈົ້າໜີ້ຜູ້ອື່ນ ທີ່ບໍ່ມີການຈຳນອງ ຫຼື ເຈົ້າໜີ້ທີ່ໄດ້ຮັບການຈຳນອງນຳຫຼັງຕົນດ້ວຍອະສັງຫາລິມະຊັບນັ້ນ, ເວັ້ນເສຍແຕ່ໃນກໍລະນີທີ່ໄດ້ກຳນົດໄວ້ໃນມາດຕາ 512 ຂອງປະມວນກົດໝາຍສະບັບນີ້.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນ ກໍລະນີລູກໜີ້ບໍ່ປະຕິບັດພັນທະໃນການໃຊ້ແທນໜີ້ສິນ ແມ່ນ ຜູ້ຮັບຈຳນອງສາມາດນຳໃຊ້ສິດຕໍ່ການຈຳນອງໃນການຂາຍອະສັງຫາລິມະຊັບທີ່ເປັນເປົ້າໝາຍ, ທັງເຮັດໃຫ້ເຫັນໄດ້ຢ່າງຈະແຈ້ງກ່ຽວກັບຂັ້ນຕອນກ່ຽວກັບບຸລິມະສິດໃນການເກັບກູ້ໜີ້ ລວມທັງວິທີການແບ່ງປັນເງິນທີ່ໄດ້ຈາກການຂາຍອະສັງຫາລິມະຊັບດັ່ງກ່າວ.
ຕົວຢ່າງ	**1. ກ**ໄດ້ໄປກູ້ຍືມເງິນຈຳນວນ 10.000.000 ກີບນຳ **ຂ** ກຳນົດເວລາ ຫ້າເດືອນ, ໂດຍເອົາໃບຕາດິນນາຂອງ **ກ** ໄປຈົດທະບຽນການຈຳນອງເພື່ອຮັບປະກັນການໃຊ້ແທນໜີ້ສິນ ເມື່ອຮອດກຳນົດເວລາ **ກ** ບໍ່ສາມາດໃຊ້ແທນໜີ້ສິນໄດ້ ຈຶ່ງທວງໃຫ້ປະຕິບັດຕາມສັນຍາ ເພື່ອໃຊ້ແທນໜີ້ສິນ **ຂ** ຈຶ່ງສາມາດປະກາດຂາຍດິນນາໄດ້, ຖ້າ **ກ** ບໍ່ເຫັນດີ **ຂ** ຈຶ່ງທວງໃຫ້ **ກ** ປະຕິບັດຕາມສັນຍາຕໍ່ສານ ຕາມມາດຕາ 393 ຂອງປະມວນກົດໝາຍແພ່ງ.

	2.ກ ໄດ້ກູ້ຢືມເງິນນຳ **ຂ, ຄ** ແລະ **ງ** ຊຶ່ງ **ກ** ໄດ້ນຳເອົາໃບຕາດິນນາໜຶ່ງຕອນທີ່ອອກຊື່ **ກ** ມາເປັນຫຼັກຊັບຄ້ຳປະກັນໃນການໃຊ້ແທນໜີ້ສິນແກ່ **ຂ**, **ຄ** ແລະ **ງ** ສ່ວນ **ງ** ຜູ້ທີ່ສາມແມ່ນໄດ້ໄປຈົດທະບຽນການຈຳນອງຕໍ່ທີ່ດິນຕອນດັ່ງກ່າວນຳພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ສ່ວນເຈົ້າໜີ້ອື່ນແມ່ນບໍ່ໄດ້ຈົດທະບຽນເວລາທີ່ **ກ** ບໍ່ສາມາດໃຊ້ແທນໜີ້ສິນໄດ້ **ງ** ແມ່ນມີບຸລິມະສິດເໜືອກ່ອນ **ຂ** ແລະ **ຄ**. **3.** (ອັກ2) **ກ** ໄດ້ເອົາທີ່ດິນນາ ໜຶ່ງຕອນມີເນື້ອທີ່ 1 ໄລ່ ໄປຈຳນອງກັບ **ຂ** ເພື່ອເອົາເງິນ ຈຳນວນ 20.000.000 ກີບ ກຳນົດເວລາ 3 ເດືອນ ບໍ່ໄດ້ຈົດທະບຽນຈຳນອງ, ຕໍ່ມາ **ກ** ໄດ້ນຳເອົາຊັບດັ່ງກ່າວ ໄປຈຳນອງ ກັບ **ຄ** ເພື່ອເອົາເງິນ ຈຳນວນ 10.000.000 ກີບ ກຳນົດເວລາ 3 ເດືອນ ແລະ ໄດ້ນຳເອົາຊັບດັ່ງກ່າວ ໄປຈົດທະບຽນຈຳນອງກັບຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຢ່າງຖືກຕ້ອງ. ໃນເມື່ອຮອດກຳນົດເວລາໃຊ້ແທນເງິນຄືນແກ່ເຈົ້າໜີ້ແລ້ວ ແຕ່ລູກໜີ້ບໍ່ສາມາດປະຕິບັດພະທະໃນການໃຊ້ແທນໄດ້ **ຄ** ຈຶ່ງມີບຸລິມະສິດກ່ອນ **ຂ**, ເນື່ອງຈາກວ່າ **ຄ** ໄດ້ນຳເອົາຊັບທີ່ຈຳນອງນັ້ນໄດ້ໄປຈົດທະບຽນກັບຂະແໜງທີ່ກ່ຽວ ຂ້ອງ ຢ່າງຖືກຕ້ອງ, ສ່ວນ **ຂ** ແມ່ນໄດ້ຮັບບຸລິມະສິດຕາມຫຼັງ ເຊິ່ງໃນການຈຳນອງບໍ່ໄດ້ເອົາຊັບດັ່ງກ່າວໄປຈົດທະບຽນຈຳນອງກັບຂະແໜງທີ່ກ່ຽວຂ້ອງ (ຕາມມາດຕາ524 ຂອງປະມວນກົດໝາຍແພ່ງ) **4.** (ກໍລະນີຍົກເວັ້ນ ມາດຕາ 512) **ກ** ເປັນເຈົ້າຂອງ�โรงພິມແຫ່ງໜຶ່ງທີ່ຜະລິດສິ່ງພິມຕ່າງໆ ມີພະນັກງານ 20 ຄົນ ໃນເບື້ອງຕົ້ນແມ່ນດຳເນີນໄປດ້ວຍດີພະນັກງານໄດ້ຮັບເງິນເດືອນເປັນປົກກະຕິ ຕົກມາໄລຍະໜຶ່ງເກີດສະພາບພາວະວິກິດທາງດ້ານການເງິນ ເຈົ້າຂອງ�โรงພິມ ຈຶງໄດ້ໄປກູ້ຢືມເງິນນຳທະນາຄານ ເຊິ່ງການກູ້ຢືມ **ກ** ຈຳນວນ 1.000.000.000 ກີບ ດອກເບ້ຍ 10% ຕໍ່ປີ, ກຳນົດ 2 ປີ ໃນການກູ້ຢືມດັ່ງກ່າວ **ກ** ໄດ້ນຳເອົາທີ່ດິນ ບ່ອນທີ່ຕັ້ງโรงພິມ ພ້ອມດ້ວຍຊັບສິນພາຍໃນโรงການ ນຳໄປຈຳນອງ ແລະ ຈຳນຳ ກັບທະນາຄານດັ່ງກ່າວ ເພື່ອຮັບປະກັນໃນການໃຊ້ແທນໜີ້ສິນ ແລະ ໄດ້ນຳເອົາຊັບດັ່ງກ່າວໄປຈົດທະບຽນນຳພາກສ່ວນທີ່ກ້ຽວຂ້ອງ ຈາກນັ້ນກໍ່ດຳເນີນໄປໄດ້ດີ ຕໍ່ມາ�โรงພິມຂອງ **ກ** ເກີດວິກິດທາງດ້ານເງິນ ແລະ ບໍ່ສາມາດຈ່າຍເງິນເດືອນໃຫ້ແກ່ພະນັກງານ ແລະ ໃຊ້ແທນໜີ້ສິນຄືນແກ່ທະນາຄານໄດ້ **ກ** ຈຶ່ງໄດ້ໄປຮ້ອງຟ້ອງຕໍ່ສານເພື່ອໃຫ້ສານຕັດສິນວ່າໃຫ້ເປັນຜູ້ ລົ້ມລະລາຍ ເມື່ອສານຕັດສິນ ແລະ ບອກວ່າ **ກ** ເປັນຜູ້ລົ້ມລະລາຍ ໃຫ້ນຳທີ່ດິນພ້ອມດ້ວຍຊັບສິນພາຍໃນโรงງານ ມາປະກາດຂາຍເພື່ອນຳເງິນມາຈ່າຍຄ່າແຮງງານຂອງພະນັກງານກ່ອນ ເປັນອັນດັບໜຶ່ງ ຈາກນັ້ນຈຶ່ງນຳໄປຊຳລະໜີ້ສິນຄືນໃຫ້ແກ່ເຈົ້າໜີ້ອື່ນຕາມລຳດັບ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 25 ຂອງກົດໝາຍວ່າດ້ວຍການຄ້ຳປະກັນການປະຕິບັດສັນຍາ ປີ 2005 ໂດຍປ່ຽນ ຄຳວ່າ: ການຄ້ຳປະກັນ ເປັນຄຳວ່າ ຈຳນອງ; ແລະຄຳວ່າເຈົ້າໜີ້ຜູ້ທີ່ຮັບຈຳນອງ ແລະ ລູກໜີ້ ເປັນຜູ້ຈຳນອງອະທິບາຍຄຳສັບປະກາດຂາຍ ໃນມາດຕານີ້ ໝາຍເຖິງ ປ່າວຮ້ອງ, ບອກໃຫ້ຮູ້ທົ່ວໄປ (ໜ້າ 592 ຂອງວັດຈະນານຸກົມພາສາລາວ ສະຖາບັນວິທະຍາສາດສັງຄົມແຫ່ງຊາດ 2012 ຄຳວ່າປະມູນ ແມ່ນໝາຍເຖິງການແຂ່ງຂັນລາຄາ (ໜ້າ 601ຂອງວັດຈະນານຸກົມພາສາລາວ ສະຖາບັນວິທະຍາສາດສັງຄົມແຫ່ງຊາດ 2012).
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 320 ແລະ 324 ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2015.
ມາດຕາອ້າງອີງ	ມາດຕາ 562 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ຂ2. ການຈຳນອງດ້ວຍສັງຫາລິມະຊັບ

ມາດຕາ552ການຈຳນອງດ້ວຍສັງຫາລິມະຊັບ

ການຈຳນອງດ້ວຍສັງຫາລິມະຊັບ ແມ່ນການຮັບປະກັນການໃຊ້ແທນໜີ້ສິນ ຫຼື ການປະຕິບັດພັນທະອື່ນແກ່ເຈົ້າໜີ້ດ້ວຍການຈົດທະບຽນສັງຫາລິມະຊັບທີ່ນຳມາຈຳນອງນັ້ນ ໂດຍບໍ່ໄດ້ມອບສັງຫາລິມະຊັບດັ່ງກ່າວ ໃຫ້ຢູ່ໃນການຄອບຄອງຂອງຜູ້ຮັບຈຳນອງ.

ສັງຫາລິມະຊັບທີ່ນຳມາຈຳນອງນັ້ນ ຕ້ອງແມ່ນສັງຫາລິມະຊັບທີ່ມີທະບຽນກຳມະສິດ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ວ່າການຈຳນອງດ້ວຍສັງຫາລິມະຊັບໝາຍເຖິງການຮັບປະກັນໃນການໃຊ້ແທນໜີ້ສິນ ຫຼື ການປະຕິບັດພັນທະອື່ນໆແກ່ເຈົ້າໜີ້ ດ້ວຍການຈົດທະບຽນການຈຳນອງໃນສັງຫາລິມະຊັບທີ່ໄດ້ເຮັດຈຳນອງນັ້ນ, ເຈົ້າໜ້າທີ່ເປັນຜູ້ຮັບຈຳນອງ ຈະບໍ່ໄດ້ຄອບຄອງສັງຫາລະມະຊັບທີ່ເປັນເປົ້າໝາຍ. ເຮັດໃຫ້ເຈົ້າກຳມະສິດທີ່ໄດ້ເຮັດຈຳນອງແມ່ນຍັງສາ ມາດຄອບຄອງ ແລະ ນຳໃຊ້ຊັບດັ່ງກ່າວໄດ້.
ຕົວຢ່າງ	**ກ** ໄດ້ກູ້ຢືມເງິນນຳ **ຂ**, **ກ**ໄດ້ເອົາລົດກະບະໝາຍເລກທະບຽນ ກກ 0000 ອອກຊື່ຂອງ **ກ** ໄປຈຳນອງກັບ **ຂ**, ໂດຍກໍບໍ່ຈຳເປັນສົ່ງມອບລົດຄັນທີ່ຈຳນອງນັ້ນໄວ້ນຳ **ຂ**. ພຽງແຕ່ນຳໄປຈົດທະບຽນການຈຳນອງໄວ້ກັບຂະແໜງການເງິນທີ່ກ່ຽວຂ້ອງເທົ່ານັ້ນ ແຕ່ **ກ** ຍັງມີສິດຄອບຄອງ ແລະ ນຳໃຊ້ລົດຄັນດັ່ງກ່າວຕາມປົກກະຕິ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງໃໝ່ເພື່ອກຳນົດໃຫ້ເຫັນອີກທາງເລືອກກ່ຽວກັບກັບການຮັບປະກັນການໃຊ້ແທນໜີ້ສິນດ້ວຍການຈຳນອງຊັບເຄື່ອນທີ່ທີ່ມີທະບຽນກຳມະສິດທີ່ເຈົ້າໜີ້ບໍ່ຈຳເປັນຄອບຄອງຊັບທີ່ນຳມາຈຳນອງນັ້ນມີແຕ່ນຳໄປຈົດທະບຽນຈຳນອງໄວ້ເທົ່ານັ້ນ, ມາດຕານີ້ອານຸຍາດໃຫ້ມີການຈຳນອງສະເພາະຊັບທີ່ມີທະບຽນເທົ່ານັ້ນ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 317 ຂອງປະມວນກົດໝາຍຫວຽດນາມປີ 2015.
ມາດຕາອ້າງອີງ	ມາດຕາ 512 ແລະ 562 ຂອງປະມວ່ນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄ້ວາ

ມາດຕາ553 ເງື່ອນໄຂການຈຳນອງດ້ວຍສັງຫາລິມະຊັບ

ການຈຳນອງດ້ວຍສັງຫາລິມະຊັບ ຕ້ອງປະຕິບັດຕາມເງື່ອນໄຂ ດັ່ງນີ້:

1. ມີສັນຍາໃຊ້ແທນໜີ້ສິນ ຫຼື ການປະຕິບັດພັນທະອື່ນ;
2. ມີການຕົກລົງຈຳນອງ;
3. ສັງຫາລິມະຊັບທີ່ນຳໄປຈຳນອງບໍ່ຢູ່ໃນການຄອບຄອງຂອງຜູ້ຮັບຈຳນອງ;
4. ສັງຫາລິມະຊັບທີ່ນຳໄປຈຳນອງຕ້ອງເປັນກຳມະສິດຂອງຜູ້ຈຳນອງ;
5. ຕ້ອງເຮັດເປັນລາຍລັກອັກສອນ ແລະ ຈົດທະບຽນນຳພາກສ່ວນທີ່ກ່ຽວຂ້ອງຂອງລັດ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ ແລະ ສາມາດເຂົ້າໃຈໃນເງື່ອນໄຂຂອງການຈຳນອງດ້ວຍສັງຫາລິມະຊັບ.
ຕົວຢ່າງ	**1. ກ** ເຮັດສັນຍາກູ້ຢືມເງິນ ຈຳນວນ 10.000.000 ກີບ ນຳ **ຂ** ພ້ອມທັງ **ຂ** ເອງໄດ້ຕົກລົງເອົາລົດໝາຍເລກທະບຽນ0001 (ທະບຽນອອກຊື່ **ຂ)** ມາຈຳນອງໃນການໃຊ້ແທນໜີ້ສິນ (ສັນຍາກູ້ຢືມ), **ກ** ຜູ້ຮັບຈຳນອງ (ເຈົ້າໜີ້) ໄດ້ນຳເອົາສັນຍາຈຳນອງໄປຈົດທະບຽນການຈຳນອງນຳ ອົງການທີ່ກ່ຽວຂ້ອງ, ສ່ວນການຄອບຄອງນຳໃຊ້ລົດຄັນດັ່ງກ່າວແມ່ນຍັງຢູ່ນຳ **ຂ**.

	2. ກ ກູ້ຢືມເງິນ ຈາກ **ຂ** ແລະ **ກ** ເຫັນດີເອົາລົດຈັກມາຈຳນອງ ແຕ່ພາຍຫຼັງທີ **ຂ** ໄດ້ກວດເອກະສານແລ້ວພົບວ່າທະບຽນລົດຈັກດັ່ງກ່າວ ບໍ່ໄດ້ອອກຊື່ **ກ** ແຕ່ອອກຊື່ຜູ້ອື່ນ ກໍລະນີນີ້ຊັບສັງຫາລິມະຊັບທີ່ນຳມາຈຳນອງບໍ່ເປັນກຳມະສິດຂອງຜູ້ຈຳນອງ ຖືວ່າການຈຳນອງບໍ່ຄົບເງື່ອນໄຂຂອງການຈຳນອງດ້ວຍສັງຫາລິມະຊັບ.
ເຫດຜົນໃນການປັບປຸງ	ມາດຕານີ້ໄດ້ປັບປຸງມາຈາກມາດຕາ 13 ຂອງກົດໝາຍວ່າດ້ວຍການຄ້ຳປະກັນການປະຕິບັດສັນຍາປີ 2005 ໂດຍເພີ່ມສັນຍາຈຳນອງຕ້ອງເຮັດເປັນລາຍລັກອັກສອນ ແລະ ຕ້ອງມີການຈົດທະບຽນການຈຳນອງ ເພື່ອແນ່ໃສ່ເຮັດສັນຍາໃຫ້ສັນຍາຈຳນອງມີຄວາມສົມບູນ ແລະ ຄົບຖ້ວນ ຈຶ່ງມີຜົນສັກສິດທາງດ້ານກົດໝາຍ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 546 ແລະ 562 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ554 ຜົນຂອງການຈຳນອງດ້ວຍສັງຫາລິມະຊັບ

ຜົນຂອງການຈຳນອງດ້ວຍສັງຫາລິມະຊັບ ແມ່ນຄືກັນກັບຜົນຂອງການຈຳນອງດ້ວຍອະສັງຫາລິມະຊັບຕາມທີ່ໄດ້ກຳນົດໄວ້ໃນມາດຕາ 550 ຂອງປະມວນກົດໝາຍສະບັບນີ້.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນ ກ່ຽວກັບຜົນຂອງການເຮັດຈຳນອງດ້ວຍສັງຫາລິມະຊັບ ເຊັ່ນ: ການຄຸ້ມຄອງສັງຫາລິມະຊັບທີ່ເປັນເປົ້າໝາຍການສົ່ງສັງຫາລິມະຊັບຄືນ ເມື່ອປະຕິບັດພັນທະໜີ້ສິນຄົບຖ້ວນ ລວມທັງການໃຊ້ແທນໜີ້ສິນຕາງລູກໜີ້ ໂດຍຜູ້ຈຳນອງເພື່ອໜີ້ສິນບຸກຄົນອື່ນ (ລູກໜີ້), ສິດທອງເອົາເງິນຈາກລູກໜີ້ ກໍລະນີທີ່ໄດ້ເສັຍສິດຕໍ່ສັງຫາລິມະຊັບ ຍ້ອນມີການນຳໃຊ້ສິດຕໍ່ການຈຳນອງ.
ຕົວຢ່າງ	**ກ** ກູ້ຢືມເງິນ 10.000.000 ກີບ ນຳ **ຂ** ກຳນົດ 3 ເດືອນ, ໂດຍເອົາລົດຂອງຕົນ ໝາຍເລກທະບຽນ 0002 ມາຈຳນອງເພື່ອຮັບປະກັນໃນການໃຊ້ແທນໜີ້ສິນ. ຕໍ່ມາ **ກ** ໄດ້ຂາຍລົດທີ່ນຳມາຈຳນອງນັ້ນ ຂາຍໃຫ້ **ຄ** ຈາກນັ້ນ **ຂ** ຈຶ່ງຮູ້ ແລະ ໄດ້ທວງເອົາສັບຈຳນອງຈາກ **ກ**, ກໍລະນີນີ້ **ກ** ໄດ້ລະເມີດການຈຳນອງ ແລະ **ຂ** ກໍມີສິດທວງເອົາຄ່າໃຊ້ຈ່າຍໃນການຕິດຕາມເອົາສັງຫາລິມະຊັບທີ່ນຳມາຈຳນອງນັ້ນ ຈາກ **ກ**.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 14, 23, 24 ແລະ 25 ຂອງກົດໝາຍວ່າດ້ວຍການຄ້ຳປະກັນການປະຕິບັດສັນຍາ ປີ 2005 ແຕ່ເປັນການຄ້ຳປະກັນທີ່ເຈົ້າໜີ້ ຫຼື ຜູ້ຮັບຈຳນອງ ດ້ວຍສັງຫາລິມະຊັບ ທີ່ເຈົ້ນໜີ້ບໍ່ໄດ້ຄອບຄອງຊັບ ແລະ ຜົນຂອງການຈຳນອງປະເພດນີ້ແມ່ນປະຕິບັດຕາມຫຼັກການດຽວກັນກັບທີ່ກຳນົດໄວ້ໃນມາດຕາ 550 ຂອງປະມວນແພ່ງ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	322, 323 ແລະ 324 ຂອງປະມວນກົດໝາຍແພ່ງຂອງ ຫວຽດນາມປີ 2015.
ມາດຕາອ້າງອີງ	ມາດຕາ 550 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ555 ສິດຂອງຜູ້ຮັບຈຳນອງຕໍ່ສັງຫາລິມະຊັບທີ່ນຳມາຈຳນອງ

ສິດຂອງຜູ້ຮັບຈຳນອງ ຕໍ່ສັງຫາລິມະຊັບທີ່ນຳມາຈຳນອງແມ່ນຄືກັນກັບສິດຂອງຜູ້ຮັບຈຳນອງດ້ວຍອະສັງຫາລິມະຊັບ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 551 ຂອງປະມວນກົດໝາຍສະບັບນີ້.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນກໍລະນີທີ່ລູກໜີ້ບໍ່ປະຕິບັດພັນທະໜີ້ສິນ ແມ່ນຜູ້ຮັບຈຳນອງສາມາດນຳໃຊ້ສິດຕໍ່ການຈຳນອງໃນການຂາຍສັງຫາລິມະຊັບທີ່ເປັນເປົ້າໝາຍ, ທັງເຮັດໃຫ້ໄດ້ເຫັນຂັ້ນຕອນບຸລິມະສິດໃນການເກັບກູ້ໜີ້, ລວມທັງວິທີການແບ່ງປັນເງິນທີ່ໄດ້ມາຈາກການຂາຍສັງຫາລິມະຊັບ.
ຕົວຢ່າງ	**ກ** ກູ້ຢືມເງິນຈຳນວນ 10.000.000 ກີບ ນຳ **ຂ** ກຳນົດເວລາ 5 ເດືອນໂດຍເອົາລົດໝາຍເລກທະບຽນ 0003 ໄປຈົດທະບຽນການຈຳນອງນຳພະແນກທີ່ກ່ຽວຂ້ອງເພື່ອຮັບປະກັນການໃຊ້ແທນໜີ້ສິນຊຶ່ງເມື່ອຮອດກຳນົດເວລາ **ກ** ບໍ່ສາມາດໃຊ້ແທນໜີ້ສິນແກ່ **ຂ** ໄດ້ **ຂ** ຈຶ່ງໄດ້ປະກາດຂາຍລົດໝາຍທະບຽນ0003ເພື່ອໃຊ້ແທນໜີ້ສິນ ຖ້າ **ກ** ບໍ່ເຫັນດີ **ຂ** ຈຶ່ງທວງໃຫ້ **ກ** ປະຕິບັດຕາມສັນຍາຕໍ່ສານ ຕາມມາດຕາ 393 ຂອງປະມວນກົດໝາຍແພ່ງ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງໃໝ່ ໂດຍອີງໃສມາດຕາ 551 ຂອງປະມວນແພ່ງ ສະນັ້ນ ສິດຂອງຜູ້ຮັບຈຳນອງດ້ວຍສັງຫາລິມະຊັບ ຈຶ່ງມີສິດຄືກັນກັບສິດຂອງຜູ້ຮັບຈຳນອງດ້ວຍອະສັງຫາລະມະຊັບ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	320 ແລະ 324 ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2015.
ມາດຕາອ້າງອີງ	ມາດຕາ 551 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ຄ. ການຄ້ຳປະກັນດ້ວຍບຸກຄົນ ຫຼືນິຕິບຸກຄົນອື່ນ

ມາດຕາ556 ການຄ້ຳປະກັນດ້ວຍບຸກຄົນ ຫຼື ນິຕິບຸກຄົນອື່ນ

ການຄ້ຳປະກັນດ້ວຍບຸກຄົນ ຫຼື ນິຕິບຸກຄົນອື່ນ ແມ່ນການທີ່ບຸກຄົນ ຫຼື ນິຕິບຸກຄົນໃດໜຶ່ງ ໄດ້ຕົກລົງໃຊ້ແທນໜີ້ສິນ ຫຼື ປະຕິບັດພັນທະອື່ນຕາງລູກໜີ້ ຖ້າລູກໜີ້ ຫາກບໍ່ໃຊ້ແທນໜີ້ສິນ ຫຼື ບໍ່ປະຕິບັດພັນທະອື່ນດ້ວຍຕົນເອງ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນຄວາມໝາຍຂອງການຄ້ຳປະກັນ (ດ້ວຍບຸກຄົນ ແລະນິຕິບຸກຄົນ) ເຊິ່ງເປັນການຕົກລົງຂອງເຈົ້າໜີ້ວ່າກໍລະນີທີ່ລູກໜີ້ບໍ່ປະຕິບັດພັນທະໜີ້ສິນ ແມ່ນບຸກຄົນ ຫຼື ນິຕິບຸກຄົນອື່ນ ຈະມາປະຕິບັດພັນທະໜີ້ສິນແທນລູກໜີ້ດັ່ງກ່າວ.
ຕົວຢ່າງ	**ກ** ໄດ້ກູ້ຢືມເງິນນຳ **ຂ,** ເປັນຜູ້ຄ້ຳປະກັນໃນການໃຊ້ແທນເງິນກູ້ຢືມໃຫ້ແກ່ **ຂ** ດອກເບ້ຍ 2% ຕໍ່ເດືອນ, ກຳນົດເວລາ 3 ເດືອນໃນເມື່ອຄົບກຳນົດເວລາແລ້ວ **ກ** ບໍ່ສາມາດໃຊ້ແທນເງິນກູ້ຢືມຄືນແກ່ **ຂ** ໄດ້ ກໍລະນີນີ້ສັນຍາຄ້ຳປະກັນດ້ວຍບຸກຄົນລະຫວ່າງ **ຂ** ກັບ **ຄ** ບໍ່ໄດ້ກຳນົດໄວ້ເປັນຢ່າງອື່ນແມ່ນ **ຂ** ມີສິດທວງໃຫ້ **ຄ** ຮັບຜິດຊອບໃຊ້ແທນເງິນກູ້ຢືມຕົ້ນທຶນໃຫ້ແກ່ **ຂ** ໃນກໍລະນີສັນຍາຄ້ຳປະກັນດ້ວຍບຸກຄົນລະຫວ່າງ **ຂ** ກັບ **ຄ** ບໍ່ໄດ້ກຳນົດໄວ້ຢ່າງອື່ນ ສ່ວນດອກເບ້ຍແມ່ນໃຫ້ **ຂ** ໄປທວງເອົານຳ **ກ**.
ເຫດຜົນໃນການປັບປຸງ	ມາດຕານີ້ປັງປຸງມາຈາກມາດຕາ26ຂອງກົດໝາຍວ່າດ້ວຍການຄ້ຳປະກັນການປະຕິບັດສັນຍາ ປີ 2005 ເພື່ອໃຫ້ມັນຈະແຈ້ງ ແລະ ສອດຄ່ອງກັບກັບສະພາບຄວາມເປັນຈິງຂອງສັງຄົມເຮົາ. ເນື້ອໃນຂອງມາດຕານີ້ແມ່ນເຈົ້າໜີ້ຕ້ອງໄປທວງກັບລູກໜີ້ກ່ອນ ຖ້າລູກໜີ້ບໍ່ສາມາດໃຊ້ແທນໄດ້ ເຈົ້າໜີ້ຈຶ່ງໄປທວງນຳຜູ້ຄ້ຳປະກັນ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 335 ຂອງປະມວນກົດໝາຍແພ່ງຫວຽດນາມປີ 2015.
ມາດຕາອ້າງອີງ	ມາດຕາ 556 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ557 ຮູບການຂອງສັນຍາຄ້ຳປະກັນດ້ວຍບຸກຄົນຫຼືນິຕິບຸກຄົນອື່ນ

ການຄ້ຳປະກັນດ້ວຍບຸກຄົນ ຫຼື ນິຕິບຸກຄົນອື່ນ ຕ້ອງເຮັດເປັນລາຍລັກອັກສອນ ຈະເຮັດລວມໃນສັນຍາຕົ້ນຕໍ ຫຼື ແຍກຕ່າງຫາກກໍໄດ້ ແລະ ຕ້ອງໄດ້ຮັບການຢັ້ງຢືນ ຈາກນາຍທະບຽນສານ ຫຼື ນາຍບ້ານ ແລະ ມີພະຍານເຂົ້າຮ່ວມນຳ.

ຈຸດປະສົງ	ເພື່ອກຳນົດ ຮູບການ ແລະ ຂັ້ນຕອນ ທີ່ຈຳເປັນເພື່ອເຮັດໃຫ້ສັນຍາຄ້ຳປະກັນດ້ວຍບຸກຄົນ ໂດຍສັນຍາຄ້ຳປະກັນດ້ວຍບຸກຄົນຕ້ອງໄດ້ເຮັດເປັນລາຍລັກອັກສອນຕ້ອງໄດ້ຮັບການຢັ້ງຢືນຈາກນາຍທະບຽນສານ ຫຼື ນາຍບ້ານ ແລະ ຕ້ອງມີພະຍານເຂົ້າຮ່ວມນຳ.
ຕົວຢ່າງ	**ກ** ໄດ້ເປັນຜູ້ຄ້ຳປະກັນການກູ້ຢືມເງິນ ຂອງ **ຂ** ແລະ **ຄ** ໄດ້ສ້າງສັນຍາຄ້ຳປະກັນດ້ວຍບຸກຄົນ ຕ້ອງໄດ້ເຮັດເປັນລາຍລັກອັກສອນ ແລ້ວນຳໄປຢັ້ງຢືນຄວາມຖືກຕ້ອງຈາກຫ້ອງ ການທະບຽນສານ ຫຼື ຢັ້ງຢືນຈາກນາຍບ້ານ ແລະ ມີພະຍານເຂົ້າຮ່ວມນຳ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງໃໝ່ເພື່ອກຳນົດໃຫ້ເຫັນຮູບແບບຂອງຜູ້ຄ້ຳປະກັນດ້ວຍບຸກຄົນໃຫ້ຈະແຈ້ງ ແລະ ໃຫ້ປະຕິບັດຕາມກົດໝາຍກຳນົດໄວ້.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 446, 454 ແລະ 465/6 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ558 ຂອບເຂດຄວາມຮັບຜິດຊອບຂອງຜູ້ຄ້ຳປະກັນ

ຜູ້ຄ້ຳປະກັນ ອາດຄ້ຳປະກັນການໃຊ້ແທນໜີ້ສິນ ຫຼື ປະຕິບັດພັນທະ ຕາງລູກໜີ້ ທັງໝົດ ຫຼື ສ່ວນໃດສ່ວນໜຶ່ງກໍໄດ້ ຕາມທີ່ໄດ້ຕົກລົງໄວ້ໃນສັນຍາຄ້ຳປະກັນ. ໃນກໍລະນີການໃຊ້ແທນໜີ້ສິນ, ຜູ້ຄ້ຳປະກັນມີພັນທະໃຊ້ແທນພຽງແຕ່ຕົ້ນທຶນເທົ່ານັ້ນ, ເວັ້ນເສຍແຕ່ສັນຍາຫາກໄດ້ກຳນົດໄວ້ເປັນຢ່າງອື່ນ.

ເມື່ອເຖິງເວລາທີ່ໄດ້ກຳນົດໄວ້ໃນສັນຍາແລ້ວ, ເຈົ້າໜີ້ຕ້ອງທວງເອົານຳລູກໜີ້ເສຍກ່ອນ, ຖ້າລູກໜີ້ຫາກບໍ່ໃຊ້ແທນໜີ້ສິນແລ້ວ, ເຈົ້າໜີ້ຈຶ່ງມີສິດທວງເອົານຳຜູ້ຄ້ຳປະກັນໄດ້.

ຜູ້ຄ້ຳປະກັນ ແລະ ລູກໜີ້ ມີພັນທະແຈ້ງ ໃຫ້ກັນຊາບກ່ຽວກັບການໃຊ້ແທນໜີ້ສິນທີ່ຕົນໄດ້ປະຕິບັດໄປແລ້ວ.

ຜູ້ຄ້ຳປະກັນທີ່ໄດ້ໃຊ້ໜີ້ສິນທັງໝົດ ຫຼື ສ່ວນໃດສ່ວນໜຶ່ງ ຕາງລູກໜີ້ແລ້ວນັ້ນ ກໍກາຍເປັນເຈົ້າໜີ້ຂອງລູກໜີ້ຜູ້ນັ້ນ ແລະ ມີສິດທວງເອົາຕົ້ນທຶນທີ່ຕົນໄດ້ຈ່າຍໄປແລ້ວ ລວມທັງດອກເບ້ຍ ແລະ ຄ່າໃຊ້ຈ່າຍຕ່າງໆ ນຳລູກໜີ້ຜູ້ນັ້ນ ຖ້າຫາກໄດ້ຕົກລົງກັນໄວ້ໃນສັນຍາ.

ຈຸດປະສົງ	ເພື່ອກຳນົດ ກ່ຽວກັບຂອບເຂດຄວາມຮັບຜິດຊອບຂອງຜູ້ຄ້ຳປະກັນ, ເງື່ອນໄຂທີ່ເຈົ້າໜີ້ທວງໃຫ້ຜູ້ຄ້ຳປະກັນປະຕິບັດພັນທະໜີ້ສິນ, ພັນທະໃນການແຈ້ງເຊິ່ງກັນ ແລະ ກັນ ກໍລະນີຜູ້ຄ້ຳປະກັນ ແລະ ລູກໜີ້ຕ່າງກໍປະຕິເສດພັນທະໜີ້ສິນ, ສິດທວງຂອງຜູ້ຄ້ຳປະກັນທີ່ໄດ້ປະຕິບັດພັນທະຄ້ຳປະກັນສຳເລັດທີ່ມີຕໍ່ລູກໜີ້ ເພື່ອທວງເອົາການທົດແທນ.
ຕົວຢ່າງ	**ກ** ໄດ້ກູ້ຢືມເງິນນຳ **ຂ** ຈຳນວນ 10.000.000 ກີບຊຶ່ງ **ຄ** ເປັນຜູ້ຄ້ຳປະກັນການປະຕິບັດສັນຍາຮ້ອຍສ່ວນຮ້ອຍຊຶ່ງຈະຮັບຜິດຊອບທັງຕົ້ນທຶນ ແລະ ດອກເບ້ຍ (ກໍລະນີ **ຄ** ໄດ້ຕົກລົງກັບ **ຂ** ໄວ້ຢ່າງອື່ນ) ກໍລະນີ **ກ** ບໍ່ສາມາດໃຊ້ແທນເງິນຄືນແກ່ **ຂ** ໄດ້ **ຄ** ຕ້ອງເປັນຜູ້ຮັບຜິດຊອບໃຊ້ແທນຕົ້ນທຶນພ້ອມດ້ວຍດອກເບ້ຍ. ນອກນັ້ນ, ກໍລະນີ **ກ** ບໍ່ປະຕິບັດພັນທະໜີ້ສິນນັ້ນ **ຂ** ຕ້ອງທວງກັບ **ກ** ເສຍກ່ອນ.

	ກໍລະນີທີ່ **ຄ** ແລະ **ຂ** ໄດ້ຕົກລົງໄວ້ເປັນຢ່າງອື່ນ,**ຄ** ມີສິດທວງເອົາເງິນຕົ້ນທຶນ ແລະ ດອກເບ້ຍ ທີ່ **ຄ** ໄດ້ໃຊ້ແທນໃຫ້ **ຂ** ຄືນ ຈາກ **ກ** ພ້ອມທັງຄ່າໃຊ້ຈ່ຍໃນການທວງຕ່າງໆຈາກ **ກ**. ໃຊ້ບໍ່ໄດ້ແມ່ນ **ຄ** ຈະຕ້ອງໄດ້ໃຊ້ແທນໜີ້ສິນທັງໝົດທີ່ເກີດຂຶ້ນຊຶ່ງຕົນໄດ້ຄ້ຳປະກັນນັ້ນ.
ເຫດຜົນໃນການປັບປຸງ	ມາດຕານີ້ໄດ້ປັບປຸງມາຈາກມາດຕາ 27 ຂອງກົດໝາຍວ່າດ້ວຍການຄ້ຳປະກັນການປະຕິບັດສັນຍາປີ 2005 ເພື່ອໃຫ້ຈະແจ້ງໃນການໃຊ້ແທນໜີ້ສິນຜູ້ຄ້ຳປະກັນມີພັນທະໃຊ້ແທນໜີ້ສິນແຕ່ຕົ້ນທຶນຄືນແກ່ເจົ້າໜີ້ ສ່ວນດອກເບ້ຍແມ່ນເจົ້າໜີ້ບໍ່ສາມາດທວງກັບຜູ້ຄ້ຳປະກັນໄດ້.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 336 ແລະ 340 ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2015.
ມາດຕາອ້າງອີງ	ມາດຕາ 556 557, 559 ແລະ 561 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ559 ການຄ້ຳປະກັນຮ່ວມ

ໜີ້ສິນອາດຖືກຄ້ຳປະກັນດ້ວຍສອງ ຫຼື ຫຼາຍຄົນ ຊຶ່ງເອີ້ນວ່າ ຜູ້ຄ້ຳປະກັນຮ່ວມໃນສັນຍາດຽວ ຫຼື ຫຼາຍສັນຍາກໍໄດ້.

ຜູ້ຄ້ຳປະກັນຮ່ວມແຕ່ລະຄົນ ຈະຄ້ຳປະກັນໜີ້ສິນຮ້ອຍສ່ວນຮ້ອຍ ຫຼື ໜ້ອຍກວ່ານັ້ນກໍໄດ້ ຕາມທີ່ໄດ້ຕົກລົງກັນ. ໃນກໍລະນີການຄ້ຳປະກັນແຕ່ລະຄົນຮ້ອຍສ່ວນຮ້ອຍນັ້ນ ເจົ້າໜີ້ມີສິດທວງເອົາໜີ້ສິນທັງໝົດນຳຜູ້ຄ້ຳປະກັນຮ່ວມຜູ້ໃດໜຶ່ງກໍໄດ້.

ໃນກໍລະນີການຄ້ຳປະກັນສ່ວນໃດໜຶ່ງນັ້ນ ເจົ້າໜີ້ມີສິດທວງເອົາໜີ້ສິນນຳຜູ້ຄ້ຳປະກັນຮ່ວມຕາມສ່ວນທີ່ຜູ້ກ່ຽວຮັບຜິດຊອບ.

ເມື່ອລູກໜີ້ຫາກໄດ້ໃຊ້ແທນໜີ້ສິນສ່ວນໃດໜຶ່ງແລ້ວ ເจົ້າໜີ້ມີສິດທວງເອົາໜີ້ສິນທີ່ຍັງເຫຼືອນັ້ນ ນຳຜູ້ຄ້ຳປະກັນຮ່ວມຜູ້ໃດໜຶ່ງກໍໄດ້ ຖ້າຫາກແມ່ນການຄ້ຳປະກັນໜີ້ສິນຮ້ອຍສ່ວນຮ້ອຍ. ຖ້າແມ່ນການຄ້ຳປະກັນໜີ້ສິນສ່ວນໃດໜຶ່ງ ເจົ້າໜີ້ມີສິດທວງເອົາໜີ້ສິນ ຕາມພູດຂອງແຕ່ລະຄົນຮັບຜິດຊອບ.

ຈຸດປະສົງ	ເພື່ອກຳນົດກ່ຽວກັບການຄ້ຳປະກັນຮ່ວມ ຊຶ່ງເປັນສັນຍາຄ້ຳປະກັນທີ່ເຮັດຂຶ້ນລະຫວ່າງຜູ້ຄ້ຳປະກັນຫລາຍຄົນ ແລະ ເจົ້າໜີ້ ເພື່ອຄ້ຳປະກັນຕໍ່ການປະຕິບັດພັນທະຕໍ່ໜີ້ສິນອັນດຽວ.
ຕົວຢ່າງ	**1. ກ**ກູ້ຢືມເງິນນຳ **ຂ** ຈຳນວນ10.000.000 ກີບການກູ້ຢືມໃນຄັ້ງນີ້ມີຜູ້ຄ້ຳປະກັນຮ່ວມກັນສອງຄົນຄື **ຄ** ແລະ **ງ** ເປັນຜູ້ຄ້ຳປະກັນໃຫ້, ຊຶ່ງຜູ້ຄ້ຳປະກັນທີ່ໜຶ່ງ **ຄ** ຄ້ຳປະກັນຈຳນວນ 3.000.000 ກີບ ແລະ ຜູ້ທີສອງ **ງ** ແມ່ນຄ້ຳປະກັນ 8.000.000 ກີບ, ກໍລະນີ **ກ** ບໍ່ມີຄວາມສາມາດໃຊ້ແທນແມ່ນຜູ້ຄ້ຳປະກັນທັງສອງຈະຮັບຜິດຊອບຕາມສ່ວນທີ່ຕົນເອງຄ້ຳປະກັນຕາມສັນຍານັ້ນ. **2. ກ** ກູ້ຢືມເງິນນຳ ຈຳນວນ 10.000.000 ກີບ ນຳ **ຂ** ໃນການກູ້ຢືມ ນີ້ **ຄ** ແລະ **ງ** ໄດ້ເຮັດສັນຍາຄ້ຳປະກັນດ້ວຍບຸກຄົນ (ສັນຍາຄ້ຳປະກັນ) ກັບ **ຂ** ເຮັດໃຫ້ພວກກ່ຽວກາຍເປັນຜູ້ຄ້ຳປະກັນຮ່ວມ ໃນການຄ້ຳປະກັນ **ຄ** ແມ່ນຄ້ຳປະກັນ ມູນຄ່າ ຈຳນວນ4.000.000 ກີບ ແລະ **ງ** ແມ່ນຄ້ຳປະກັນ ມູນຄ່າ ຈຳນວນ 6.000.000 ກີບ ຕາມສັນຍາຄ້ຳປະກັນທີ່ໄດ້ຕົກລົງກັນໃນສັນຍາຄ້ຳປະກັນດັ່ງກ່າວ, ໃນກໍລະນີ **ກ** ບໍ່ສາມາດໃຊ້ແທນເງິນຄືນແກ່ **ຂ** ໄດ້ ຕ້ອງແມ່ນ **ຄ** ແລະ **ງ** ຜູ້ຄ້ຳປະກັນທັງສອງຕ້ອງເປັນຜູ້ຮັບຜິດຊອບຕາມສ່ວນທີ່ຕົນເອງຄ້ຳປະກັນຕາມສັນຍານັ້ນ. **3. ກ** ໄດ້ກູ້ຢືມເງິນຈາກ **ຂ** ຈຳນວນ 10.000.000 ກີບ ເຊິ່ງ **ຄ** ແລະ **ງ** ເປັນຜູ້ຄ້ຳປະກັນຮ່ວມກັນສຳລັບການກູ້ຢືມໃນຄັ້ງນີ້ລະຫວ່າງ **ກ** ແລະ **ຂ**, ໂດຍຜູ້ທຳອິດຄື **ຄ** ຄ້ຳປະກັນເຕັມຈຳນວນ 10.000.000 ກີບ ແລະ ຜູ້ທີສອງຄື **ງ** ກໍຄ້ຳປະກັນເຕັມຈຳນວນ 10.000.000 ກີບ

	ເຊັ່ນກັນ ຕາມການຮ້ອງຂໍຂອງເຈົ້າໜີ້ **ຂ** ສະນັ້ນ, ກໍລະນີ **ກ** ບໍ່ສາມາດໃຊ້ແທນໜີ້ສິນ **ຂ** ໄດ້ນັ້ນ**ຂ** ສາມາດເລືອກທວງໄດ້ຈາກທັງ **ຄ** ແລະ **ງ** ເພື່ອໃຫ້ຈ່າຍເງິນ ຈຳນວນ 10.000.000 ກີບ ຄືນໃຫ້ຕົນເມື່ອ **ຂ** ໄດ້ຮັບການໃຊ້ແທນເງິນຄົບ ຕາມຈຳນວນ 10.000.000 ກີບ ແລ້ວ, ສິດທວງຂອງ **ຂ** ກໍຈະຖືກປະຕິບັດຄົບຖ້ວນແລະສິດໃນການທວງເພື່ອໃຫ້ **ຄ** ແລະ **ງ** ໃຊ້ໜີ້ນັ້ນກໍຈະຕົກໄປແມ່ນເອົາກໍລະນີການຄ້ຳປະກັນໂດຍທີ່ຜູ້ຄ້ຳປະກັນຮ່ວມແຕ່ລະຄົນຈະຄ້ຳປະກັນໜີ້ສິນຮ້ອຍສ່ວນຮ້ອຍຕາມທີ່ໄດ້ຕົກລົງກັນຕາມມາດຕາ 559 ວັກ 2. ເຊິ່ງສາມາດຂຽນໄດ້ຄືດັ່ງຕໍ່ໄປນີ້: ຕົວຢ່າງ 3: **ກ** ໄດ້ກູ້ຢືມເງິນຈາກ **ຂ** ຈຳນວນ 10.000.000 ກີບ ເຊິ່ງ **ຄ** ແລະ **ງ** ເປັນຜູ້ຄ້ຳປະກັນຮ່ວມກັນສຳລັບການກູ້ຢືມນີ້. ໂດຍຜູ້ທຳອິດຄື**ຄ**ຄ້ຳປະກັນເຕັມຈຳນວນ10.000.000ກີບ ແລະ ຜູ້ທີສອງຄື **ງ** ກໍຄ້ຳປະກັນເຕັມຈຳນວນ 10.000.000 ກີບເຊັ່ນກັນ ຕາມການຮ້ອງຂໍຂອງເຈົ້າໜີ້ **ຂ** ສະນັ້ນ, ກໍລະນີ **ກ** ບໍ່ສາມາດໃຊ້ແທນໜີ້ສິນໄດ້ນັ້ນ, **ຂ** ສາມາດເລືອກທວງໄດ້ຈາກທັງ **ຄ** ແລະ **ງ** ເພື່ອໃຫ້ຈ່າຍເງິນ ຈຳນວນ 10.000.000 ກີບຄືນໃຫ້ຕົນເມື່ອ **ຂ** ໄດ້ຮັບການໃຊ້ແທນເງິນຄົບຈຳນວນ 10.000.000 ກີບ ແລ້ວ, ສິດທວງຂອງ **ຂ** ກໍຈະຖືກປະຕິບັດຄົບຖ້ວນ ແລະ ສິດໃນການທວງເພື່ອໃຫ້ **ຄ** ແລະ **ງ** ໃຊ້ໜີ້ນັ້ນກໍຈະຕົກໄປ.
ເຫດຜົນໃນການຮັກສາເດີມ	ມາດຕານີ້ຮັກສາເນື້ອໃນເດີມ ຕາມມາດຕາ 28 ຂອງກົດໝາຍວ່າດ້ວຍການຄ້ຳປະກັນການປະຕິບັດສັນຍາ ປີ 2005.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 339 ຂອງປະມວນກົດໝາຍແພ່ງຫວຽດນາມປີ 2015; ມາດຕາ 456 ແລະ 465 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ560 ການເສຍຊີວິດ ຫຼື ການເສຍຄວາມສາມາດທາງດ້ານການປະພຶດຂອງຜູ້ຄ້ຳປະກັນ

ເມື່ອມີການເສຍຊີວິດຂອງຜູ້ຄ້ຳປະກັນ, ການຄ້ຳປະກັນຍັງຕ້ອງໄດ້ຮັບການສືບຕໍ່ປະຕິບັດ ໂດຍຜູ້ສືບທອດ ຫຼື ຜູ້ຄຸ້ມຄອງມູນມໍຣະດົກ.

ເມື່ອມີການເສຍຄວາມສາມາດທາງດ້ານການປະພຶດຂອງຜູ້ຄ້ຳປະກັນ,ການຄ້ຳປະກັນຍັງຈະສືບຕໍ່ປະຕິບັດໂດຍຜູ້ປົກຄອງ, ເວັ້ນເສຍແຕ່ເຈົ້າໜີ້ຫາກຮຽກຮ້ອງໃຫ້ລູກໜີ້ຊອກຫາຜູ້ຄ້ຳປະກັນໃໝ່.

ຈຸດປະສົງ	ເພື່ອກຳນົດ ລະບຽບການກ່ຽວກັບການສືບທອດຄວາມຮັບຜິດຊອບຂອງຜູ້ຄ້ຳປະກັນໃນກໍລະນີຜູ້ຄ້ຳປະກັນເສຍຊີວິດ ຫຼື ເສຍຄວາມສາມາດທາງດ້ານການປະພຶດ.
ຕົວຢ່າງ	**ກ** ກູ້ຢືມເງິນນຳ **ຂ** ຈຳນວນ 100.000.000 ກີບ ໃນການກູ້ຢືມ **ຄ** ໄດ້ເປັນຜູ້ຄ້ຳປະກັນໃຫ້ແກ່ການໃຊ້ແທນໜີ້ສິນຄືນແກ່ **ຂ** ຢູ່ມາໄລຍະໜຶ່ງ **ຄ** ໄດ້ເສຍຊີວິດ ເຊິ່ງ **ຄ** ໄດ້ມີຊັບຄືທີ່ດິນໜຶ່ງຕອນພ້ອມດ້ວຍເຮືອນໜຶ່ງຫຼັງ ຊຶ່ງຜູ້ຄ້ຳປະກັນນັ້ນຈະກາຍມາເປັນລູກຂອງ **ຄ** ເປັນຜູ້ຄ້ຳປະກັນແທນ. (ໃນກໍລະນີນີ້ຖ້າລູກຂອງ **ຄ** ຫາກຍອມຮັບເອົາຊັບຂອງ**ຄ** ທີ່ເປັນມູນມໍລະດົກຂອງພໍ່ສະນັ້ນ, ລູກຂອງ**ຄ**ຕ້ອງໄດ້ຮັບຜິດຊອບໃນການປະຕິບັດພັນທະໂດຍອັດຕາໂນມັດ (ຍົກເວັ້ນ ຖ້າລູກຂອງ **ຄ** ບໍ່ຮັບເອົາ ແລະ ບໍ່ສາມາດສືບທອດໄດ້ ນັ້ນກໍສະແດງວ່າຜູ້ສືບທອດໄດ້ຕົກໄປ).
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກມາດຕາ 29 ຂອງກົດໝາຍວ່າດ້ວຍການຄ້ຳປະກັນການປະຕິບັດສັນຍາສະບັບປີ2005ແລະ ໄດ້ປ່ຽນຄຳວ່າເສຍຈິດມາເປັນຜູ້ເສຍຄວາມສາມາດທາງດ້ານການປະພຶດ.

ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງຕ່າງປະເທດ	ສືບຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 565,566 ແລະ 570 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄ້ວາ.

ມາດຕາ561ການພົ້ນຈາກການຄ້ຳປະກັນ

ຜູ້ຄ້ຳປະກັນຈະພົ້ນຈາກການຄ້ຳປະກັນ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ລູກໜີ້ໄດ້ໃຊ້ແທນໜີ້ສິນ ຫຼື ປະຕິບັດພັນທະອື່ນ ຄົບຖ້ວນແລ້ວ;
2. ຜູ້ຄ້ຳປະກັນໄດ້ປະຕິບັດພັນທະຂອງຕົນ ຕາມທີ່ໄດ້ກຳນົດໄວ້ໃນສັນຍາ;
3. ມີການປ່ຽນແປງ, ເພີ່ມເຕີມເນື້ອໃນສັນຍາລະຫວ່າງລູກໜີ້ ແລະ ເຈົ້າໜີ້ ໂດຍຜູ້ຄ້ຳປະກັນ ບໍ່ເຫັນດີນຳ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນກ່ຽວກັບກໍລະນີການພົ້ນຈາກພັນທະການຄ້ຳປະກັນຂອງຜູ້ຄ້ຳປະກັນ.
ຕົວຢ່າງ	**1. ກ** ໄດ້ກູ້ຢືມເງິນ ຈຳນວນ 10.000.000 ກີບ ນຳ **ຂ** , ໂດຍ **ຄ** ເປັນຜູ້ຄ້ຳປະກັນການກູ້ຢືມເງິນ ໃຫ້ແກ່ **ກ**, ເມື່ອຮອດກຳນົດເວລາ **ກ** ໄດ້ໃຊ້ແທນໜີ້ສິນໃຫ້ແກ່ **ຂ** ຄົບຖ້ວນຕາມທີ່ໄດ້ຕົກລົງກັນ ສະນັ້ນ, ຜູ້ຄ້ຳປະກັນ **ຄ** ຈຶ່ງສິ້ນສຸດພັນທະໃນການເປັນຜູ້ຄ້ຳປະກັນ. **2. ກ** ໄດ້ກູ້ຢືມເງິນ ຈຳນວນ 10.000.000 ກີບ ນຳ **ຂ** , ໂດຍ **ຄ** ເປັນຜູ້ຄ້ຳປະກັນການກູ້ຢືມເງິນ ໃຫ້ແກ່ **ກ**, ເມື່ອຮອດກຳນົດເວລາ **ກ** ບໍ່ມີຄວາມສາມາດໃຊ້ແທນໜີ້ສິນໃຫ້ແກ່ **ຂ**, ເມື່ອ **ກ** ບໍ່ສາມາດໃຊ້ແທນໜີ້ສິນ**ຂ** ຈຶ່ງໄດ້ທວງເອົາເງິນນຳ **ຄ** ຜູ້ຄ້ຳປະກັນ, **ຄ** ຜູ້ຄ້ຳປະກັນຈຶ່ງໄດ້ປະຕິບັດພັນທະຂອງຕົນ ໂດຍໃຊ້ແທນໜີ້ສິນທັງໝົດ ຈຳນວນ 10.000.000 ກີບໃຫ້ແກ່ **ຂ**. **3. ກ** ໄດ້ກູ້ຢືມເງິນຈຳນວນ 10.000.000 ກີບ ນຳ **ຂ**, ໂດຍ **ຄ** ເປັນຜູ້ຄ້ຳປະກັນການກູ້ຢືມເງິນ ໃຫ້ແກ່ **ກ**, ແຕ່ມາຮອດໄລຍະໃດໜຶ່ງ **ກ** ແລະ **ຂ** ໄດ້ປັບປຸງ ເນື້ອໃນສັນຍາ ຊຶ່ງ **ກ** ໄດ້ຂໍກູ້ເງິນເພີ່ມອີກ ຈຳນວນ 5.000.000 ກີບ ໂດຍບໍ່ແຈ້ງໃຫ້ **ຄ** ຮູ້ເມື່ອຮອດກຳນົດເວລາ **ກ** ບໍ່ມີຄວາມສາມາດໃຊ້ແທນໜີ້ສິນໃຫ້ແກ່ **ຂ**, **ຂ** ຈຶ່ງໄດ້ທວງເອົາເງິນນຳ **ຄ** ຜູ້ຄ້ຳປະກັນ ໂດຍເອົາສັນຍາ ທີ່ໄດ້ມີການເພີ່ມເຕີມເລື່ອງຈຳນວນເງິນ ມາທວງໃຫ້ **ຄ** ຮັບຜິດຊອບໃຊ້ແທນໜີ້ສິນທັງໝົດ, ແຕ່ **ຄ** ຜູ້ຄ້ຳປະກັນ ຈະພົ້ນຈາກການຄ້ຳປະກັນໃນສ່ວນທີ່ **ກ** ໄດ້ເອົາເພີ່ມ ຈຳນວນ 5.000.000 ກີບ ແຕ່ໃນສ່ວນພັນທະທີ່ຄ້ຳປະກັນໃນຈຳນວນເງິນ 10.000.000 ກີບ ແມ່ນຍັງຕ້ອງໄດ້ປະຕິບັດໃນສ່ວນທີ່ຮັບຮູ້ນັ້ນ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກມາດຕາ 30 ຂອງກົດໝາຍວ່າດ້ວຍການຄ້ຳປະກັນການປະຕິບັດສັນຍາ ປີ 2005.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 343 ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2015; ມາດຕາ 448 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 556 ແລະ 560 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄ້ວາ.

ໝວດທີ 4
ການຈົດທະບຽນ, ການສະລະບຸລິມະສິດ ແລະ ການໂອນການຄ້ຳປະກັນ

ມາດຕາ562 ການຈົດທະບຽນ

ການຈຳນຳ ແລະ ການຈຳນອງ ດ້ວຍອະສັງຫາລິມະຊັບ ຕ້ອງຈົດທະບຽນການເຄື່ອນໄຫວສິດນຳໃຊ້ທີ່ດິນ ນຳຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຂັ້ນເມືອງບ່ອນຊັບຕັ້ງຢູ່. ໃນກໍລະນີເອົາສິດນຳໃຊ້ທີ່ດິນຕອນດຽວໄປຈຳນຳ ຫຼື ຈຳນອງກັບເຈົ້າໜີ້ຫຼາຍຄົນ, ໃນເວລາຈົດທະບຽນການເຄື່ອນໄຫວສິດນຳໃຊ້ທີ່ດິນນັ້ນ ເຈົ້າຂອງສິດນຳໃຊ້ທີ່ດິນ ຕ້ອງມອບໃບຕາດິນໃຫ້ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງ ແວດລ້ອມຂັ້ນເມືອງ ບ່ອນທີ່ດິນຕັ້ງຢູ່ ເປັນຜູ້ເກັບຮັກສາໄວ້ໃນລະບົບທະບຽນທີ່ດິນ.

ການຈຳນອງດ້ວຍສັງຫາລິມະຊັບ ຕ້ອງຈົດທະບຽນ ນຳຂະແໜງການການເງິນ ຫຼື ຂະແໜງການອື່ນທີ່ກ່ຽວຂ້ອງ.

ການຈົດທະບຽນການຈຳນຳ ແລະ ການຈຳນອງ ຕ້ອງດຳເນີນຢ່າງໂປ່ງໃສ. ຂໍ້ມູນກ່ຽວກັບການຈົດທະບຽນການຈຳນຳ ແລະ ການຈຳນອງນັ້ນ ສາມາດເຂົ້າເຖິງໂດຍບໍ່ຈຳເປັນຕ້ອງມີການຮ້ອງຂໍ.

ຂັ້ນຕອນ ແລະ ວິທີຈົດທະບຽນ ການຈຳນຳ ແລະ ການຈຳນອງ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

ຈຸດປະສົງ	ເພື່ອກຳນົດ ກ່ຽວກັບສິດອຳນາດໃນການຈົດທະບຽນ, ຄວາມໂປ່ງໃສຂອງຂັ້ນຕອນການຈົດທະບຽນ, ລວມທັງການເຂົ້າເຖິງຂໍ້ມູນຂອງການຈົດທະບຽນການຄ້ຳປະກັນດ້ວຍອະສັງ ຫາລິມະຊັບ ແລະ ສັງຫາລິມະຊັບ.
ຕົວຢ່າງ	**1. ການຈຳນຳ: ກ** ໄດ້ກູ້ຢືມເງິນ ຈຳນວນ 10.000.000 ກີບ ນຳ **ຂ** ໂດຍໄດ້ເອົາເອກະສານຢັ້ງຢືນກຳມະສິດທີ່ດິນຂອງ **ກ** ໄປຈຳນຳກູ້ຢືມເງິນນຳ **ຂ** ສິ່ງສຳຄັນແມ່ນ **ກ** ບໍ່ພຽງແຕ່ມອບທີ່ດິນໃຫ້ **ຂ** ເພື່ອເປັນການຈຳນຳເທົ່ານັ້ນ ແຕ່ຕ້ອງໄດ້ນຳເອົາເອກະສານຢັ້ງຢືນກຳມະສິດໄປຈົດທະບຽນນຳພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຂັ້ນເມືອງບ່ອນທີ່ດິນຕັ້ງຢູ່ ຫຼື ພາກສ່ວນທີ່ກ່ຽວຂ້ອງ ເພື່ອຮັບຮູ້ວ່າທີ່ດິນຕອນດັ່ງກ່າວແມ່ນໄດ້ຖືກນຳໄປຈຳນຳເພື່ອຄ້ຳປະກັນໜີ້ສິນ. **2. ການຈຳນອງ: ກ** ໄດ້ກູ້ຢືມເງິນ ຈຳນວນ 200.000.000 ກີບ ນຳ **ຂ** ໂດຍໄດ້ເອົາເອກະສານຢັ້ງຢືນກຳມະສິດທີ່ດິນ ເພື່ອຈຳນອງການກູ້ຢືມ ແລະ ສິ່ງສຳຄັນແມ່ນ ສັນຍາຈຳນຳ ພ້ອມເອກະສານຢັ້ງຢືນກຳມະສິດນັ້ນ ແມ່ນຕ້ອງໄດ້ນຳໄປຈົດທະບຽນຮັບຮູ້ນຳພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂັ້ນເມືອງ ບ່ອນທີ່ດິນຕັ້ງຢູ່ ຫຼື ພາກສ່ວນທີ່ກ່ຽວຂ້ອງ ເພື່ອຮັບຮູ້ວ່າທີ່ດິນຕອນດັ່ງກ່າວແມ່ນໄດ້ຖືກນຳໄປຈຳນອງເພື່ອຄ້ຳປະກັນໜີ້ສິນ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກມາດຕາ 31 ຂອງກົດໝາຍວ່າດ້ວຍການຄ້ຳປະກັນການປະຕິບັດສັນຍາ ສະບັບປີ 2005 ເພື່ອໃຫ້ຈະແຈ້ງ ແລະ ແທນເໝາະກັບສະພາບປັດຈຸບັນ, ເນື່ອງຈາກການຈົດທະບຽນ ເປັນລະບົບໜຶ່ງທີ່ສາມາດຮັບປະກັນໄດ້ການຄ້ຳປະກັນຊ້ຳຊ້ອນກັນ, ຊຶ່ງປັດຈຸບັນນີ້ການກູ້ຢືມທີ່ເກີດຂຶ້ນແມ່ນສ່ວນຫຼາຍເຈົ້າໜີ້ຈະນຳໃຊ້ລະບົບການໂອນລອຍຊັບໄວ້ກ່ອນ (ໝາຍຄວາມວ່າໃຫ້ລູກໜີ້ເຮັດທຸລະກຳໃນການໂອນຊັບສິນຄ້ຳປະກັນເປັນຊື່ຂອງເຈົ້າໜີ້ໄວ້ກ່ອນ ກໍລະນີທີ່ລູກໜີ້ຫາກໃຊ້ແທນໜີ້ສິນຄົບຖ້ວນແລ້ວຈຶ່ງໂອນຄືນ) ຊຶ່ງຕາມຫຼັກການແລ້ວແມ່ນບໍ່ຖືກຕ້ອງ ດັ່ງນັ້ນ ຖ້າມີການນຳໃຊ້ລະບົບຂອງການຈົດທະບຽນຊັບຄ້ຳປະກັນທີ່ແນ່ນອນ ຊັດເຈນ ແລະ ເປັນລະບົບທີ່ເອກະພາບໃນຂອງເຂດທົ່ວປະເທດແລ້ວ, ລະບົບດັ່ງກ່າວແມ່ນຈະສ້າງຄວາມເຊື່ອຖື ແລະ ເຊື່ອໝັ້ນ ໃຫ້ເຈົ້າໜີ້ ໃນການຈະໄດ້ຮັບການຊົດໃຊ້ທົດແທນຄືນໜີ້ສິນຈາກການກູ້ຢືມນັ້ນ, ໃນກໍລະນີໜຶ່ງອີກ ການຈົດທະບຽນການຄ້ຳປະກັນໜີ້ສິນຍັງເປັນພື້ນຖານໜຶ່ງໃຫ້ແກ່ການປົກປ້ອງຜົນປະໂຫຍດຊັບຂອງຜູ້ຄ້ຳປະກັນ ແລະ ເຮັດໃຫ້ເຈົ້າຂອງຊັບສາມາດ ແລະ ມີສິດໃນການນຳເອົາຊັບສິນຂອງຕົນທີ່ມີມູນຄ່າສູງກວ່າໜີ້ສິນ ສາມາດໄປຄ້ຳປະກັນໜີ້ສິນອື່ນໆ ຫຼື ຫຼາຍໆໜີ້ສິນໄດ້ອີກ. ເຊັນ ຊັບດຽວສາມາດນຳໄປຄ້ຳປະກັນໄດ້ຫຼາຍໆໜີ້ສິນ.

ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງຕ່າງປະເທດ	ມາດຕາ 298 ຂອງປະມວນກົດໝາຍແພ່ງ ຫວຽດນາມ ປີ 2015.
ມາດຕາອ້າງອີງ	ມາດຕາ 104 ຂອງກົດໝາຍວ່າດ້ວຍທີ່ດິນ ປີ 2019.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ

ມາດຕາ563 ການລົບລ້າງການຈົດທະບຽນການຄ້ຳປະກັນ

ການຈົດທະບຽນການຄ້ຳປະກັນຈະຖືກລົບລ້າງ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ຜູ້ຮັບຈຳນອງ ຫຼື ຜູ້ຮັບຈຳນຳ ສະເໜີໃຫ້ລົບລ້າງການຈົດທະບຽນ;
2. ມີຄຳຕັດສິນຂອງສານໃຫ້ລົບລ້າງການຄ້ຳປະກັນ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນກ່ຽວກັບສາເຫດຂອງການລົບລ້າງການຈົດທະບຽນການຄ້ຳປະກັນ.
ຕົວຢ່າງ	**1. ການຈຳນຳ: ກ** ໄດ້ກູ້ຢືມເງິນ ຈຳນວນ 10.000.000 ກີບ ນຳ **ຂ** ໂດຍໄດ້ເອົາໃບຮຸ້ນທີ່ມີມູນຄ່າ 15.000.000 ກີບ ເພື່ອຄ້ຳປະກັນການກູ້ຢືມ ພາຍໃນກຳນົດເວລາ ສາມເດືອນ ແລະ ສິ່ງສຳຄັນແມ່ນ ໃບຮຸ້ນທີ່ນຳມາຈຳນຳ ແລະ ຢູ່ໃນການຄອບຄອງຂອງ **ຂ** ນັ້ນ ແມ່ນຕ້ອງໄດ້ຮັບການຈົດທະບຽນຮັບຮູ້ຈາກບໍລິສັດທີ່ອອກໃບຮຸ້ນນັ້ນວ່າ ໃບຮຸ້ນດັ່ງກ່າວແມ່ນໄດ້ຖືກນຳໄປຈຳນຳເພື່ອຄ້ຳປະກັນໜີ້ສິນ, ເມື່ອເຖິງກຳນົດເວລາສາມເດືອນແລ້ວ **ກ** ໄດ້ເອົາເງິນມາໃຊ້ແທນ **ຂ** ຕາມສັນຍາທີ່ຕົກລົງກັນ ຖືໄດ້ວ່າສັນຍາແມ່ນສິ້ນສຸດ ການຈົດທະບຽນການຄ້ຳປະກັນກໍຕ້ອງໄດ້ຖືກລົບລ້າງ ເຊັ່ນຕ້ອງໄດ້ໃຫ້ບໍລິສັດທີ່ອອກໃບຮຸ້ນນັ້ນຈົດທະບຽນ ຫຼື ຢັ້ງຢືນການວ່າຊັບນັ້ນບໍ່ໄດ້ມີການຄ້ຳປະກັນອີກ ຕາມການຮ້ອງຂໍຂອງຜູ້ຈຳນຳ. **2. ການຈຳນອງ: ກ** ໄດ້ກູ້ຢືມເງິນ ຈຳນວນ 200.000.000 ກີບ ນຳ **ຂ** ໂດຍໄດ້ເອົາເອກະສານຢັ້ງຢືນກຳມະສິດທີ່ດິນ ເພື່ອຄ້ຳປະກັນການກູ້ຢືມ ແລະ ສິ່ງສຳຄັນແມ່ນ ເອກະສານຢັ້ງຢືນກຳມະສິດນັ້ນ ແມ່ນຕ້ອງໄດ້ນຳໄປຮັບການຈົດທະບຽນຮັບຮູ້ຈາກອົງການຄຸ້ມຄອງທີ່ດິນ ຫຼື ພາກສ່ວນທີ່ກ່ຽວຂ້ອງເພື່ອຮັບຮູ້ວ່າທີ່ດິນຕອນດັ່ງກ່າວແມ່ນໄດ້ຖືກນຳໄປ ຈຳນອງເພື່ອຄ້ຳປະກັນໜີ້ສິນ, ຕໍ່ມາເມື່ອເຖິງກຳນົດເວລາການຕົກລົງຕາມສັນຍາແລ້ວ**ກ**ໄດ້ເອົາເງິນມາໃຊ້ແທນ **ຂ** ຖືໄດ້ວ່າສັນຍາ ແມ່ນສິ້ນສຸດ ການຈົດທະບຽນການຢັ້ງຢືນການຈຳນອງທີ່ດິນ ຫຼື ຊັບທີ່ນຳໄປຄ້ຳປະກັນນັ້ນ ກໍຕ້ອງໄດ້ຮັບການລົບລ້າງຕາມການຮ້ອງຂໍຂອງຜູ້ຈຳນອງ. **3. (ຂໍ້ 2): ກ** ມີທີ່ດິນໜຶ່ງຕອນ ແລະ ມີສິດນຳໃຊ້ ໄດ້ເອົາທີ່ດິນດັ່ງກ່າວໄດ້ເຮັດການຈຳນອງກັບ **ຂ** ໄດ້ຈົດທະບຽນການຄ້ຳປະກັນດັ່ງກ່າວເປັນທີ່ຮຽບຮ້ອຍແລ້ວ. ຕໍ່ມາໄດ້ມີຂໍ້ເທັດຈິງປະກົດອອກມາວ່າ **ຂ** ໄດ້ມາອາໄສຢູ່ທີ່ດິນຂອງ **ກ** ແຕ່ **ກ** ບໍ່ຮູ້ ແລ້ວໄດ້ນຳເອົາເອກະສານສິດນຳໃຊ້ທີ່ດິນ **ກ** ຝາກໄວ້ນຳຕົນ ໄປປະກອບເອກະສານເພື່ອເຮັດສັນຍາກູ້ຢືມປອມ ແລ້ວນຳໄປຈົດທະບຽນໂດຍຖືກຕ້ອງຕາມກົດໝາຍ **ກ** ຈຶ່ງໄດ້ຮ້ອງຟ້ອງຕໍ່ສານເພື່ອທວງໃຫ້ **ຂ** ລົບລ້າງການຈົດທະບຽນການຈຳນອງດັ່ງກ່າວ ໃນທີ່ສຸດສານກໍຕັດສິນຮັບຮູ້ສິດທວງຂອງ **ກ** ແລະ ຄຳຕັດສິນດັ່ງກ່າວກໍໃຊ້ໄດ້ຢ່າງເດັດຂາດ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກມາດຕາ 32 ຂອງກົດໝາຍວ່າດ້ວຍການຄ້ຳປປະກັນ ການປະຕິບັດສັນຍາ ສະບັບປັບປຸງປີ 2005.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 562 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 564 ການສະລະບຸລິມະສິດ ແລະ ການໂອນການຄ້ຳປະກັນ

ຜູ້ຮັບຈຳນຳ ຫຼື ຜູ້ຮັບຈຳນອງ ທີ່ມີບຸລິມະສິດ ສາມາດສະລະບຸລິມະສິດຂອງຕົນໃຫ້ເຈົ້າໜີ້ຜູ້ອື່ນ ທີ່ມີການຈຳນຳ ຫຼື ຈຳນອງ ແຕ່ບໍ່ໃຫ້ເກີນມູນຄ່າໜີ້ສິນຂອງຕົນ.

ຜູ້ຮັບຈຳນຳ ຫຼື ຜູ້ຮັບຈຳນອງ ມີສິດໂອນການຄ້ຳປະກັນຂອງຕົນໃຫ້ເຈົ້າໜີ້ຜູ້ອື່ນ ທີ່ບໍ່ມີການການຄ້ຳປະກັນ ກັບລູກໜີ້ຜູ້ດຽວກັນ ແຕ່ບໍ່ໃຫ້ເກີນມູນຄ່າໜີ້ຕາມການຄ້ຳປະກັນ.

ຜູ້ຮັບຈຳນຳ ຫຼື ຜູ້ຮັບຈຳນອງ ສາມາດໂອນການຄ້ຳປະກັນ ລວມທັງຜົນປະໂຫຍດ, ບຸລິມະສິດທີ່ຕິດພັນກັບການຄ້ຳປະກັນຂອງຕົນໃຫ້ບຸກຄົນອື່ນແຕ່ບໍ່ໃຫ້ເກີນມູນຄ່າໜີ້ຕາມການຄ້ຳປະກັນ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນ ການສະລະບຸລິມະສິດ ຫຼື ການໂອນການຄ້ຳປະກັນ ມີຜົນໃຊ້ໄດ້ ຜູ້ຮັບຈຳນຳ ຫຼື ຈຳນອງນັ້ນ ຕ້ອງສະລະບຸລິມະສິດ ຫຼື ໂອນການຄ້ຳປະກັນ ໃນຂອບເຂດ ມູນຄ່າທີ່ໄດ້ມີການຈຳນຳ ຫຼື ຈຳນອງນັ້ນນຳຕົນ ນອກນັ້ນ, ມາດຕານີ້ຍັງໄດ້ກຳນົດກ່ຽວກັບກໍລະນີທີ່ເຈົ້າໜີ້ທີ່ມີການຄ້ຳປະກັນ ຫາກໄດ້ໂອນສິດທວງໄປຍັງບຸກຄົນທີສາມ ສິດຕໍ່ການຄ້ຳປະກັນກໍຈະຖືກໂອນໄປພ້ອມ.
ຕົວຢ່າງ	**1. ຂ** ໄດ້ເອົາເງິນໃຫ້ **ກ** ຢືມຈຳນວນ 100.000.000 ກີບໂດຍໄດ້ນຳເອົາສິດນຳໃຊ້ທີ່ດິນຂອງ **ກ** (ຕີມູນຄ່າເປັນເງິນ 200.000.000 ກີບ) ມາເຮັດເປັນການຈຳນອງແລະໄດ້ຈົດທະບຽນການຈຳນອງເປັນລຳດັບທີ 1 ຈາກນັ້ນ, **ຄ** ໄດ້ເອົາເງິນໃຫ້ **ກ** ຢືມຈຳນວນ 60.000.000 ກີບໂດຍໄດ້ນຳເອົາສິດນຳໃຊ້ທີ່ດິນຂອງ **ກ** ມາເຮັດເປັນການຈຳນອງ ແລະໄດ້ຈົດທະບຽນການຈຳນອງເປັນລຳດັບທີ 2 ນອກນັ້ນ, **ງ** ກໍໄດ້ເອົາເງິນໃຫ້ **ກ** ຢືມຈຳນວນ 40.000.000 ກີບ ໂດຍໄດ້ນຳເອົາສິດນຳໃຊ້ທີ່ດິນຂອງ **ກ** ມາເຮັດເປັນການຈຳນອງ ແລະ ກໍໄດ້ຈົດທະບຽນການຈຳນອງເປັນລຳດັບທີ 3 ຕໍ່ມາມູນຄ່າຂອງສິດນຳໃຊ້ທີ່ດິນຂອງ **ກ** ນັ້ນໄດ້ຫຼຸດລົງເຫຼືອພຽງ ຈຳນວນ 100.000.000 ກີບ. ໃນນີ້, ກໍລະນີ **ຂ** ສະລະບຸລິມະສິດລຳດັບທີ 1 ຂອງຕົນໃຫ້ແກ່ **ຄ** ຜູ້ຢູ່ລຳດັບຖັດໄປ, ນັ້ນກໍໝາຍຄວາມວ່າລະຫ່ວາງ **ຂ** ກັບ **ຄ** ແມ່ນບໍ່ມີໃຜລົ້ນໃຜ ສະນັ້ນ, ຕໍ່ກັບເງິນຈຳນວນ 100.000.000 ກີບ ທີ່ໄດ້ຈາກການຂາຍຊັບໂດຍນຳໃຊ້ສິດຈຳນອງເຊິ່ງ **ຂ** ກັບ **ຄ** ເຄີຍມີບຸລິມະສິດ (ຂອງ **ຂ** 100.000.000 ກີບ + 0 ກີບຂອງ **ຄ**) ນັ້ນ, **ຂ** ກັບ **ຄ** ຈະໄດ້ແບ່ງກັນຕາມອັດຕາສ່ວນຂອງມູນຄ່າໜີ້ຕ້ອງຮັບຂອງຕົນສະນັ້ນ, **ຂ** ຈະໄດ້ຄື [100.000.000 ກີບ x 100.000.000 ກີບ ÷ (100.000.000 ກີບ + 60.000.000 ກີບ)]= 62.500.000 ກີບ. ສ່ວນ **ຄ** ແມ່ນຈະໄດ້ຄື [100.000.000 ກີບ + 60.000.000 ກີບ ÷ (100.000.000 ກີບ + 60.000.000 ກີບ)]= 37.500.000 ກີບ ສຳລັບ **ງ** ແມ່ນຈະໄດ້ 0 ກີບ. **2. ຂ** ໄດ້ເອົາເງິນໃຫ້ **ກ** ຢືມຈຳນວນ 100 .000.000 ກີບ ໂດຍໄດ້ນຳເອົາສິດນຳໃຊ້ທີ່ດິນຂອງ **ກ** (ຕີມູນຄ່າເປັນເງິນ 200.000.000 ກີບ) ມາເຮັດເປັນການຈຳນອງ ແລະໄດ້ຈົດທະບຽນການຈຳນອງເປັນລຳດັບທີ 1 ຈາກນັ້ນ, **ຄ** ໄດ້ເອົາເງິນໃຫ້ **ກ** ຢືມຈຳນວນ 60.000.000 ກີບແຕ່ບໍ່ມີການຄ້ຳປະກັນຈາກນັ້ນ, **ງ** ກໍໄດ້ເອົາເງິນໃຫ້ **ກ** ຢືມ ຈຳນວນ 40.000.000 ກີບ ໂດຍໄດ້ນຳເອົາສິດນຳໃຊ້ທີ່ດິນຂອງ **ກ** ມາເຮັດເປັນການຈຳນອງ ແລະ ໄດ້ຈົດທະບຽນການຈຳນອງເປັນລຳດັບທີ 2 ຕໍ່ມາມູນຄ່າຂອງສິດນຳໃຊ້ທີ່ດິນຂອງ **ກ** ນັ້ນໄດ້ຫຼຸດລົງເຫຼືອພຽງ ຈຳນວນ 100.000.000 ກີບ. ໃນນີ້, ຖ້າ **ຂ** ຜູ້ຈົດທະບຽນການຈຳນອງເປັນລຳດັບທີ 1 ຫາກມອບລຳດັບໃຫ້ **ຄ** ຜູ້ບໍ່ມີການຄ້ຳປະກັນນັ້ນລຳດັບບຸລິມະສິດຂອງ **ຂ** ແລະ **ຄ** ຈະປ່ຽນແທນກັນ ສະນັ້ນ, ຕໍ່ກັບເງິນຈຳນວນ 100.000.000 ກີບ ທີ່ໄດ້ຈາກການຂາຍຊັບ ໂດຍນຳໃຊ້ສິດຈຳນອງເຊິ່ງ **ຂ** ເຄີຍມີບຸລິມະສິດນັ້ນ, **ຄ** ຈະມີບຸລິມະສິດໄດ້ຮັບເງິນ ຈຳນວນ 60.000.000 ກີບ ສ່ວນທີ່ເຫຼືອຈຳນວນ 40.000.000 ກີບ ແມ່ນຈະເປັນຂອງ **ຂ** ສຳລັບ **ງ** ແມ່ນຈະໄດ້ 0 ກີບ.

	3. ຂ ໄດ້ເອົາເງິນໃຫ້ **ກ** ຢືມຈຳນວນ 100.000.000 ກີບ ໂດຍໄດ້ນຳເອົາສິດນຳໃຊ້ທີ່ດິນຂອງ **ກ** (ຕີມູນຄ່າເປັນເງິນ ຈຳນວນ 200.000.000 ກີບ ມາເຮັດເປັນການຈຳນອງ ແລະໄດ້ຈົດທະບຽນການຈຳນອງເປັນລຳດັບທີ 1 ຈາກນັ້ນ, **ຄ** ໄດ້ເອົາເງິນໃຫ້ **ກ** ຢືມຈຳນວນ 60.000.000 ກີບ ໂດຍກໍໄດ້ນຳເອົາສິດນຳໃຊ້ທີ່ດິນຂອງ **ກ** ມາເຮັດເປັນການຈຳນອງ ແລະໄດ້ຈົດທະບຽນການຈຳນອງເປັນລຳດັບທີ 2 ນອກນັ້ນ, **ງ** ກໍໄດ້ເອົາເງິນໃຫ້ **ກ** ຢືມຈຳນວນ 40.000.000 ກີບ ໂດຍໄດ້ນຳເອົາສິດນຳໃຊ້ທີ່ດິນຂອງ **ກ** ມາເຮັດເປັນການຈຳນອງ ແລະໄດ້ຈົດທະບຽນການຈຳນອງເປັນລຳດັບທີ 3ຕໍ່ມາມູນຄ່າຂອງສິດນຳໃຊ້ທີ່ດິນຂອງ **ກ** ນັ້ນໄດ້ຫຼຸດລົງເຫຼືອພຽງ ຈຳນວນ 100.000.000 ກີບ . ໃນນີ້, ກໍລະນີ **ຂ** ມອບສິດໃນການທວງເອົາເງິນຈຳນວນ 100.000.000 ກີບ ທີ່ມີຕໍ່ **ກ** ໃຫ້ **ຈ** ນັ້ນ, ການຈົດທະບຽນການຈຳນອງລຳດັບທີ 1 ແມ່ນຖືກໂອນມາໃຫ້ **ຈ** ສະນັ້ນ, ຕໍ່ກັບເງິນຈຳນວນ 100.000.000 ກີບ ທີ່ໄດ້ຈາກການຂາຍຊັບໂດຍນຳໃຊ້ສິດຈຳນອງເຊິ່ງ **ຂ** ເຄີຍມີບູລິມະສິດນັ້ນ, **ຈ** ຈະມີບຸລິມະສິດໄດ້ຮັບກ່ອນສ່ວນ **ຄ** ແລະ **ງ** ແມ່ນຈະໄດ້ 0 ກີບ.
ເຫດຜົນໃນການຮັກສາເດີມ	ມາດຕານີ້ຮັກສາເນື້ອໃນເດີມ ມາດຕາ 32 ຂອງກົດໝາຍວ່າດ້ວຍການຄ້ຳປະກັນ ການປະຕິບັດສັນຍາ ປີ 2005 ໄວ້ ແລະ ຍັງນຳໃຊ້ໃນປັດຈຸບັນນີ້.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 376 ຂອງປະມວນກົດໝາຍຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 524 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ບົດອະທິບາຍປະມວນກົດໝາຍແພ່ງ

ພາກທີ VIII ການສືບທອດມູນມໍຣະດົກ (ມາດຕາ 565-628)

ພາກທີ VIII
ການສືບທອດມູນມໍຣະດົກ

ໝວດທີ 1
ຫຼັກການສືບທອດມູນມໍຣະດົກ

ມາດຕາ 565 ມູນມໍຣະດົກ

ມູນມໍຣະດົກ ແມ່ນຊັບທີ່ເປັນກຳມະສິດຂອງຜູ້ເສຍຊີວິດ ລວມທັງ ສິດ ແລະ ພັນທະຂອງຜູ້ກ່ຽວ, ເວັ້ນເສຍແຕ່ ສິດ ແລະ ພັນທະ ຊຶ່ງກົດໝາຍ ຫຼື ສັນຍາໄດ້ກຳນົດໄວ້ໃຫ້ຜູ້ເສຍຊີວິດ ຕ້ອງປະຕິບັດດ້ວຍຕົນເອງໃນເວລາທີ່ຜູ້ກ່ຽວມີຊີວິດຢູ່ນັ້ນ

ຈຸດປະສົງ	ເພື່ອໃຫ້ຮູ້ຄວາມໝາຍຂອງມູນມໍຣະດົກແມ່ນຊັບສົມບັດທຸກຢ່າງລວມທັງສິດ ແລະ ພັນທະຂອງຜູ້ທີເສັຍຊີວິດ.
ຕົວຢ່າງ	**1. ມູນມໍຣະດົກທີ່ເປັນຊັບຂອງເສຍຊີວິດ: ກ** ແລະ **ຂ** ຄູ່ຜົວເມຍມີສິນສົມສ້າງຄື: ເງິນຈຳນວນ 10.000.000 ກີບ, ທີ່ດິນໜຶ່ງຕອນ ແລະ ເຮືອນສອງຫຼັງ. ຕໍ່ມາ **ກ** ໄດ້ເສຍຊີວິດ ຊັບເຄິ່ງໜຶ່ງຂອງ **ກ** ຜູ້ເສຍຊີວິດນັ້ນເປັນມູນມໍຣະດົກ. **2. ມູນມໍຣະດົກທີ່ເປັນສິດ ແລະ ພັນທະຂອງຜູ້ເສຍຊີວິດ: ກ** ແລະ **ຂ** ຄູ່ຜົວເມຍ ມີໜີ້ຕ້ອງສົ່ງ ຈຳນວນ 20.000.000 ກີບ ແລະ ໜີ້ຕ້ອງຮັບເງິນ ຈຳນວນ 10.000.000 ກີບ. ຕໍ່ມາ **ກ** ໄດ້ເສຍຊີວິດ. ໜີ້ຕ້ອງສົ່ງເປັນພັນທະແລະ ໜີ້ຕ້ອງຮັບເປັນສິດຂອງຜູ້ເສຍຊີວິດ ໂດຍໃຫ້ຜູ້ສືບທອດເປັນຜູ້ຮັບຜິດຊອບ. **3. ສິດ ແລະ ພັນທະຊຶ່ງຜູ້ເສຍຊີວິດຕ້ອງປະຕິບັດດ້ວຍຕົນເອງໃນເວລາຜູ້ກ່ຽວຍັງມີຊີວິດຢູ່: ກ** ໄດ້ເປັນພະເອກຮູບເງົາ ເຮັດສັນຍາກັບ ບໍລິສັດ ຮູບເງົາໃດໜຶ່ງ ເມື່ອ **ກ** ເສຍຊີວິດໄປ ຜູ້ສືບທອດຂອງຜູ້ກ່ຽວຈະບໍ່ເປັນພະເອກ ແທນ **ກ** ຜູ້ເປັນພໍ່ໄດ້.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກມາດຕາ 3 ຂໍ້ 1 ຂອງກົດໝາຍວ່າດ້ວຍການສືບທອດ ມູນມໍຣະດົກ ປີ 2008 ໂດຍໄດ້ປັບປຸງຄຳສັບວ່າ "ຊັບສົມບັດທຸກປະເພດ" ມາ ເປັນ "**ຊັບ**" ເພື່ອໃຫ້ສອດຄ່ອງກັບຄວາມໝາຍຂອງຄຳວ່າ "**ຊັບ**" ຕາມທີ່ໄດ້ກຳ ນົດໄວ້ໃນມາດ ຕາ 227 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງຂອງປະເທດອື່ນ	ມາດຕາ 896 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ; ມາດຕາ 612ຂອງປະມວນກົດໝາຍແພ່ງຫວຽດນາມປີ 2015.
ມາດຕາອ້າງອີງ	ມາດຕາ 165, 167, 168, 169 ແລະ 227 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 566 ການສືບທອດມູນມໍຣະດົກ

ການສືບທອດມູນມໍຣະດົກ ແມ່ນການຕົກທອດມູນມໍຣະດົກຂອງຜູ້ເສຍຊີວິດ ໃຫ້ແກ່ຜູ້ສືບທອດ ມູນມໍຣະດົກ ຕາມກົດໝາຍ ຫຼື ຕາມພິໄນກຳ.

ຈຸດປະສົງ	ເພື່ອກຳນົດຄວາມໝາຍຂອງການສືບທອດມູນມໍຣະດົກ.
ຕົວຢ່າງ	**1. ກ** ແລະ **ຂ** ຄູ່ຜົວເມຍ ມີລູກ ສອງຄົນ **ຄ** ແລະ **ງ,** ມີສິນສົມສ້າງ ຄື: ເຮືອນ 1 ຫຼັງ, ທີ່ດິນ 1 ຕອນ, ລົດ 1 ຄັນ ແລະ ເງິນຈຳນວນ 50.000.000 ກີບ, ຕໍ່ມາ **ກ** ເສຍຊີວິດ ສະນັ້ນ ມູນມໍຣະດົກທີ່ເປັນພູດຂອງ **ກ** ຈຶ່ງຕົກທອດໃຫ້ແກ່ **ຄ** ແລະ **ງ** ຜູ້ມີສິດສືບທອດມູນມໍຣະດົກຕາມກົດໝາຍ.

	2. ກ ແລະ **ຂ** ຄູ່ຜົວເມຍ ມີລູກ ສອງຄົນ **ຄ** ແລະ **ງ**, ມີສິນສົມສ້າງຄື: ເຮືອນ 1 ຫຼັງ, ທີ່ດິນ 1 ຕອນ,ລົດ 1 ຄັນ ແລະເງິນຈຳນວນ 50.000.000 ກີບ, **ກ** ເຮັດພິໄນກຳມອບເງິນໃຫ້ ແກ່ ງ 5.000.000 ກີບ. ຕໍ່ມາ **ກ** ເສຍຊີວິດຍ້ອນອຸປະຕິເຫດ, ສະນັ້ນ ມູນມໍຣະດົກທີ່ເປັນພູດຂອງ **ກ** ຈຶ່ງຕົກທອດຕາມພິໄນກຳ ຄື **ງ** ແລະ ຕາມກົດໝາຍຄື **ຄ** ແລະ **ງ**.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກມາດຕາ 2 ຂອງກົດໝາຍວ່າດ້ວຍການສືບທອດມູນມໍຣະດົກປີ 2008 ໂດຍປັບປຸງຄຳວ່າ ຊັບສິມບັດທີ່ເປັນກຳມະສິດຂອງຜູ້ເສຍຊີວິດ ມາເປັນ ມາເປັນມູນມໍຣະດົກຂອງຜູ້ເສຍຊີວິດ, ສ່ວນ ຄຳວ່າ ລວມທັງສິດ ແລະ ພັນທະຂອງຜູ້ກ່ຽວ ແມ່ນໄດ້ນຳໄປໄວ້ຢູ່ໃນ ມາດຕາ 565 ຂອງປະມວນກົດໝາຍແພ່ງ ເພື່ອໃຫ້ມີຄວາມຈະແຈ້ງ ແລະ ເຂົ້າໃຈງ່າຍ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 896 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ; ມາດຕາ 609 ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2015.
ມາດຕາອ້າງອີງ	ມາດຕາ 565 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 567 ມູນມໍຣະດົກຂອງຜູ້ຖືກສານຕັດສິນເປັນຜູ້ເສຍຊີວິດ

ເມື່ອບຸກຄົນໃດ ຫາກຖືກສານຕັດສິນວ່າ ເປັນຜູ້ເສຍຊີວິດແລ້ວ, ມູນມໍຣະດົກຂອງບຸກຄົນນັ້ນ ກໍຈະຕົກທອດເປັນຂອງຜູ້ສືບທອດ. ຖ້າພາຍຫຼັງມາບຸກຄົນນັ້ນ ຫາກຍັງມີຊີວິດຢູ່,ຜູ້ສືບທອດມູນມໍຣະດົກ ຕ້ອງສົ່ງຊັບທີ່ຍັງຄົງຢູ່ ຊຶ່ງຕົນໄດ້ຮັບນັ້ນຄືນ ແຕ່ເຈົ້າຂອງຊັບ ຕ້ອງທົດແທນຄ່າໃຊ້ຈ່າຍຕ່າງໆ ໃນການປົກປັກຮັກສາມູນມໍຣະດົກນັ້ນຄືນໃຫ້ແກ່ຜູ້ສືບທອດ.

ໃນກໍລະນີຜູ້ຖືກສານຕັດສິນວ່າ ເປັນຜູ້ເສຍຊີວິດແລ້ວນັ້ນ ຫາກຍັງມີຊີວິດຢູ່ ແຕ່ບໍ່ມາທວງທາວເອົາຊັບຂອງຕົນຄືນ ພາຍໃນເວລາ ສາມປີ ສຳລັບຊັບເຄື່ອນທີ່, ຫົກປີ ສຳລັບຊັບຄົງທີ່ ນັບແຕ່ວັນຜູ້ກ່ຽວຮັບຊາບຄຳຕັດສິນຂອງສານເປັນຕົ້ນໄປ, ຊັບດັ່ງກ່າວກໍຈະຕົກເປັນຂອງຜູ້ສືບທອດ.

ຈຸດປະສົງ	ເພື່ອກຳນົດ ໃຫ້ເຫັນຂອບເຂດຂອງການສົ່ງຊັບຄືນຂອງຜູ້ສືບທອດ ໃນກໍລະນີທີ່ມູນມໍຣະດົກຂອງຜູ້ທີ່ຖືກສານຕັດສິນວ່າເປັນຜູ້ເສຍຊີວິດ ໄດ້ມີການສືບທອດແລ້ວ ແຕ່ຫຼັງຈາກນັ້ນຜູ້ກ່ຽວຍັງມີຊີວິດຢູ່ ແລ້ວກັບຄືນມາ.
ຕົວຢ່າງ	**ກ** ຖືກສານຕັດສິນໃຫ້ເປັນຜູ້ເສຍຊີວິດໃນວັນທີ 1 ມັງກອນ 2015 ຕາມຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ, **ກ** ມີລູກ 2 ຄົນ ແລະ ມີມູນມໍຣະດົກ ຄື ລົດຈັກ 1 ຄັນ, ງົວ ສີ່ໂຕ, ຄວາຍ ສອງໂຕ ແລະ ທີ່ດິນໜຶ່ງຕອນ, ມູນມໍຣະດົກທັງໝົດ ຂອງ **ກ** ຕົກທອດເປັນຂອງພວກລູກຜູ້ກ່ຽວ; ແຕ່ໃນວັນທີ 20 ສິງຫາ 2020 ຜູ້ກ່ຽວໄດ້ກັບຄືນມາ ແລະ ໄດ້ຮັບຊາບຄຳຕັດສິນຂອງສານ ຈຶ່ງໄດ້ທວງເອົາຊັບທັງໝົດ ຂອງຜູ້ກ່ຽວຄືນນຳພວກລູກ, ໃນນີ້ພວກລູກຕ້ອງໄດ້ສົ່ງ ລົດຈັກ ແລະ ທີ່ດິນທີ່ຍັງຄົງຢູ່ຄືນໃຫ້ແກ່ **ກ,** ສຳລັບຄ່າໃຊ້ຈ່າຍ ຈຳນວນ 5.000.000 ກີບ ໃນປົກປັກຮັກສາຊັບດັ່ງກ່າວ **ກ** ຕ້ອງຮັບຜິດຊອບ ທົດແທນຄືນໃຫ້ແກ່ລູກ. ມາຮອດປີ 2024 **ກ** ບໍ່ທວງເອົາລົດຈັກ (ພາຍໃນສາມປີ) ລົດຈັກຄັນດັ່ງກ່າວ ກໍຈະຕົກໄປ; ສຳລັບທີ່ດິນນັ້ນ ກໍຈະຖືກສົ່ງຄືນໃຫ້ແກ່ **ກ** (ຍ້ອນວ່າອາຍຸຄວາມ ຫົກປີບໍ່ທັນໝົດ). ສຳລັບ ງົວ ແລະ ຄວາຍ ທີ່ພວກລູກໄດ້ຊື້ຂາດໄປແລ້ວນັ້ນ, **ກ** ຈະບໍ່ສາມາດທວງເອົາຄືນໄດ້.

ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກມາດຕາ 5 ວັກ 2 ຂອງກົດໝາຍວ່າດ້ວຍການສືບທອດມູນມໍຣະດົກ 2008 ໂດຍປັບປຸງຄຳວ່າ ຊັບສົມບັດ ມາເປັນ ຊັບ ເພື່ອໃຫ້ສອດຄ່ອງກັບຄວາມໝາຍຂອງຄຳວ່າ "**ຊັບ**" ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 227 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 32 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 97, 100 ແລະ 101 ຂອງປະມວນກົດໝາຍແພ່ງ; ມາດຕາ 341 ວັກ 2 ແລະ 342 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ປີ 2012.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ

ມາດຕາ 568 ວັນເວລາເປີດການສືບທອດມູນມໍຣະດົກ

ການເປີດການສືບທອດມູນມໍຣະດົກແມ່ນເລີ່ມນັບແຕ່ວັນເວລາທີ່ເຈົ້າມູນມໍຣະດົກໄດ້ເສຍຊີວິດເປັນຕົ້ນໄປ. ໃນກໍລະນີທີ່ເຈົ້າມູນມໍຣະດົກຫາກໄດ້ຖືກສານຕັດສິນວ່າເປັນຜູ້ເສຍຊີວິດນັ້ນ ກໍ່ໃຫ້ຖືເອົາວັນເວລາທີ່ມີຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດແລ້ວ ເປັນວັນເວລາເລີ່ມເປີດການສືບທອດມູນມໍຣະດົກ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ກ່ຽວກັບມື້ໃຫ້ສິດໃນການສືບທອດມູນມໍຣະດົກ ຂອງຜູ້ມີສິດສືບທອດມູນມໍຣະດົກ.
ຕົວຢ່າງ	**1. ກ** ແລະ **ຂ** ມີລູກ 2 ຄົນຄື: **ຄ** ແລະ **ງ, ກ** ມີຊັບເດີມເງິນຈຳນວນ 10.000.000 ກີບ ແລະ ມີສິນສົມສ້າງຮ່ວມກັບ **ຂ** ຈຳນວນ 50.000.0000 ກີບ, ວັນທີ 1 ມັງກອນ 2021 ເວລາ 5ໂມງ 45 ນາທີ **ກ** ເສຍຊີວິດດ້ວຍພະຍາດຂອງຜູ້ກ່ຽວເອງ. ວັນທີ 1 ມັງກອນ 2021 ເປັນວັນເລີ່ມໃຫ້ສິດຂອງ **ຂ**, **ຄ** ແລະ **ງ** ໃນການສືບທອດມູນມໍຣະດົກທີ່ເປັນຂອງ **ກ**. **2. ກ** ໄປເຮັດວຽກຢູ່ຕ່າງແຂວງ, ໃນວັນທີ 1 ມັງກອນ 2019 ແຂວງດັ່ງກ່າວເກີດໄພພິບັດຂຶ້ນ ມາຮອດວັນທີ 10 ມັງກອນ 2019 ອົງການກ່ຽວຂ້ອງໄດ້ປະກາດສິ້ນສຸດເຫດໄພພິບັດ ແຕ່ຍັງບໍ່ທັນພົບເຫັນ **ກ** ນັບແຕ່ວັນສິ້ນສຸດເຫດການມາເປັນເວລາ 2 ປີ **ຂ** ຜູ້ເປັນເມຍຂອງ **ກ** ໄດ້ຮ້ອງຂໍຕໍ່ສານ ເພື່ອໃຫ້ຕັດສິນປະກາດ ໃຫ້ **ກ** ເປັນຜູ້ເສຍຊີວິດ, ວັນທີ 1 ມັງກອນ 2022 ຄຳຕັດສິນຂອງສານໃຊ້ໄດ້ຢ່າງເດັດຂາດ **ກ** ໄດ້ເສຍຊີວິດຕາມຄຳຕັດສິນຂອງສານ ແລະ ເປັນວັນເລີ່ມໃຫ້ສິດໃນການສືບທອດມູນມໍຣະດົກຂອງ **ກ** ຂອງຜູ້ທີ່ມີສິດສືບທອດມູນມໍຣະດົກ. **ກ** ຫາຍໄປຈາກຄອບຄົວ ໂດຍບໍ່ຮູ້ຂ່າວຄາວ ແຕ່ວັນທີ 1 ມັງກອນ 2018, ຈົນມາຮອດ ວັນທີ 1 ມັງກອນ 2021 ຍັງບໍ່ທັນພົບເຫັນ ຫຼື ຮູ້ຂ່າວຄາວຂອງ **ກ, ຂ** (ຜູ້ເປັນເມຍ) ໄດ້ຮ້ອງຂໍຕໍ່ສານ ເພື່ອປະກາດ ໃຫ້ **ກ** ເປັນຜູ້ເສຍຊີວິດ, ວັນທີ 1 ມັງກອນ 2022 ຄຳຕັດສິນຂອງສານໃຊ້ໄດ້ຢ່າງເດັດຂາດ **ກ** ໄດ້ເສຍຊີວິດຕາມຄຳຕັດສິນຂອງສານ ແລະ ເປັນວັນເລີ່ມໃຫ້ສິດໃນການສືບທອດມູນມໍຣະດົກຂອງ **ກ** ຂອງຜູ້ທີ່ມີສິດສືບທອດມູນມໍຣະດົກ.
ເຫດຜົນໃນການປັບປຸງ	ມາດຕານີ້ຮັກສາເນື້ອໃນ ແລະ ຫຼັກການເດີມຂອງ ມາດຕາ 6 ຂອງກົດໝາຍວ່າດ້ວຍການສືບທອດມູນມໍຣະດົກ ປີ 2008 ໄວ້.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 1599 ຂອງປະມວນກົດໝາຍແພ່ງ ແລະ ພານິດໄທ; ມາດຕາ 882, 30 ແລະ 31 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ; ມາດຕາ 611 ວັກ1 ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2015.

ມາດຕາອ້າງອີງ	ມາດຕາ97,98,99,100(ວັກ1ຂໍ້2)ແລະ606ຂອງປະມວນກົດໝາຍແພ່ງ; ມາດຕາ 21 ແລະ 22 ກົດໝາຍວ່າດ້ວຍ ທະບຽນຄອບຄົວ ປີ 2018.
ຂໍ້ມູນອື່ນ ຫລື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 569 ບ່ອນເປີດການສືບທອດມູນມໍຣະດົກ

ບ່ອນເປີດການສືບທອດມູນມໍຣະດົກ ແມ່ນບ່ອນຢູ່ປະຈຳສຸດທ້າຍຂອງເຈົ້າມູນມໍຣະດົກ, ຖ້າບ່ອນຢູ່ຂອງເຈົ້າມູນມໍຣະດົກນັ້ນ ຫາກບໍ່ຈະແຈ້ງ ຫຼື ມີບ່ອນຢູ່ຫຼາຍບ່ອນ ກໍໃຫ້ຖືເອົາບ່ອນມູນມໍຣະດົກທີ່ເປັນພື້ນຖານສຳຄັນຕັ້ງຢູ່ນັ້ນ ເປັນບ່ອນເປີດ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນບ່ອນເປີດການສືບທອດມູນມໍຣະດົກແມ່ນຖືເອົາບ່ອນໃດຂອງເຈົ້າມູນມໍຣະດົກ.
ຕົວຢ່າງ	**ກ** ມີບ່ອນຢູ່ສຸດທ້າຍ ບ້ານ ຂ, ເມືອງ ຄ, ແຂວງ ງ, **ກ** ເສຍຊີວິດຢູ່ບ້ານດັ່ງກ່າວ.ສະນັ້ນ,ບ່ອນເປີດການສືບທອດມູນມໍຣະດົກໃຫ້ຖືເອົາ ບ້ານ ຂ, ເມືອງ ຄ, ແຂວງ ງ. ຖ້າ **ກ** ມີຊັບສົມບັດຢູ່ຫຼາຍບ່ອນເຊັ່ນ: ເຮືອນໜຶ່ງຫຼັງ, ທີ່ດິນນາໜຶ່ງ ຕອນຢູ່ບ້ານ ຂ, ເມືອງ ຄ, ແຂວງ ງ ແລະ ມີທີ່ດິນອີກຫຼາຍຕອນຢູ່ຕ່າງເມືອງ, ຊຶ່ງ **ກ** ແມ່ນມີທີ່ຢູ່ຫຼາຍບ່ອນ, ເມື່ອ **ກ** ເສຍຊີວິດບ່ອນເປີດການສືບທອດມູນມໍຣະດົກກໍໃຫ້ຖືເອົາ ບ້ານ ຂ, ເມືອງ ຄ, ແຂວງ ງ ເປັນບ່ອນທີ່ມູນມໍຣະດົກທີ່ເປັນພື້ນຖານສຳຄັນຕັ້ງຢູ່ນັ້ນເປັນບ່ອນເປີດການສືບທອດມູນມໍຣະດົກ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກມາດຕາ 7 ວັກ 1 ຂອງກົດໝາຍວ່າດ້ວຍ ມູນມໍຣະດົກປີ 2008 ໂດຍຮັກສາວັກ ທີ 1 ຂອງມາດຕາໄວ້ຄືເກົ່າ, ສ່ວນວັກ 2 ຂອງມາດຕາແມ່ນຕັດອອກ ເພື່ອໃຫ້ມີຄວາມສອດຄ່ອງ ຕາມຈຸດປະສົງຂອງມາດຕານີ້ ໃນປະມວນກົດໝາຍແພ່ງ.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງຂອງປະເທດອື່ນ	ມາດຕາ 883 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ; ມາດຕາ 611 ວັກ1 ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2015.
ມາດຕາອ້າງອີງ	ມາດຕາ 85ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫລື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 570 ມູນມໍຣະດົກທີ່ຈະນຳມາແບ່ງປັນ

ມູນມໍຣະດົກ ທີ່ຈະນຳມາແບ່ງປັນໃຫ້ຜູ້ສືບທອດນັ້ນ ຕ້ອງເຫຼືອຈາກການຫັກຄ່າໃຊ້ຈ່າຍ ຕາມລຳດັບຄື:

1. ຄ່າໃຊ້ຈ່າຍໃນການມ້ຽນຄາບສົ່ງສະການ;
2. ການຊຳລະໜີ້ສິນຂອງເຈົ້າມູນມໍຣະດົກ;
3. ຄ່າໃຊ້ຈ່າຍໃນການສືບທອດມູນມໍຣະດົກເຊັ່ນການປົກປັກຮັກສາ ແລະ ຄຸ້ມຄອງມູນມໍຣະດົກ, ຄ່າທຳນຽມ ແລະ ການໃຊ້ຈ່າຍອື່ນໆ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນກ່ຽວກັບ ຂອບເຂດຂອງມູນມໍຣະດົກ ທີ່ເປັນເປົ້າໝາຍນຳມາແບ່ງປັນ.
ຕົວຢ່າງ	**ຄ** ພໍ່ຂອງ **ກ** ແລະ **ຂ** ໄດ້ເສຍຊີວິດ, **ຄ** ມີມູນມໍຣະດົກເງິນຈຳນວນ 100.000.000 ກີບ ແລະ ມີໜີ້ສິນ ຈຳນວນ 10.000.000 ກີບ, **ກ** ແລະ **ຂ** ໄດ້ນຳໃຊ້ຈ່າຍເງິນຈຳນວນ 30.000.000 ກີບ ເຂົ້າໃນການມ້ຽນຄາບສົ່ງສະການ **ຄ**, ຊຳລະໜີ້ສິນ ຈຳນວນ 10.000.000 ກີບ, ຈ່າຍຄ່າຄຸ້ມຄອງມູນມໍຣະດົກ ຈຳນວນ 5.000.000 ກີບ, ຄ່າເຮັດບຸນກິນທານ ແລະ ອື່ນໆ ຈຳນວນ 10.000.000 ກີບ, ສ່ວນທີ່ເຫຼືອ ຈຳນວນ 45.000.000 ກີບ **ກ** ແລະ **ຂ** ໄດ້ຮັບຄົນລະເຄິ່ງ ຄື 22.500.000 ກີບ.

ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງຂຶ້ນໃໝ່ເພື່ອໃຫ້ເຫັນວ່າ ຜູ້ມີສິດສືບທອດມູນມໍຣະດົກ ຈະນຳເອົາມູນມໍຣະດົກມາແບ່ງຕ້ອງເຫຼືອຈາກຫັກຄ່າໃຊ້ຈ່າຍຕ່າງໆ ທີ່ກ່ຽວຂ້ອງກັບເຈົ້າມູນມໍຣະດົກນັ້ນເສຍກ່ອນ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 885 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 565 ແລະ567 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 571 ປະເພດການສືບທອດ

ການສືບທອດມູນມໍຣະດົກ ມີສອງປະເພດ ຄື:

1. ການສືບທອດຕາມກົດໝາຍ;
2. ການສືບທອດຕາມພິໄນກຳ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນກ່ຽວກັບ ປະເພດຂອງການສືບທອດມູນມໍຣະດົກ.
ຕົວຢ່າງ	1. ໃຫ້ເບິ່ງຕົວຢ່າງ ຕາມມາດຕາ 572 2. ໃຫ້ເບິ່ງຕົວຢ່າງ ຕາມມາດຕາ 590
ເຫດຜົນໃນການຮັກສາເດີມ	ມາດຕານີ້ຮັກສາເນື້ອໃນເດີມມາດຕາ 8 ຂອງກົດໝາຍວ່າດ້ວຍການສືບທອດມູນມໍຣະດົກ ປີ 2008 ໄວ້ຄືເກົ່າ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 1620 ແລະ 1646 ຂອງປະມວນກົດໝາຍແພ່ງ ແລະ ພານິດໄທ; ມາດຕາ 882 ແລະ 960 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 565 ແລະ 605 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ໝວດທີ 2
ການສືບທອດມູນມໍຣະດົກຕາມກົດໝາຍ

ມາດຕາ 572 ການສືບທອດມູນມໍຣະດົກຕາມກົດໝາຍ

ການສືບທອດມູນມໍຣະດົກຕາມກົດໝາຍ ແມ່ນການຮັບເອົາມູນມໍຣະດົກ ໂດຍຜູ້ສືບທອດຕາມທີ່ໄດ້ກຳນົດໄວ້ໃນປະມວນກົດໝາຍສະບັບນີ້.

ຈຸດປະສົງ	ເພື່ອໃຫ້ຮູ້ກ່ຽວກັບ ການສືບທອດມູນມໍຣະດົກໃນກໍລະນີບໍ່ມີພິໄນກຳ.
ຕົວຢ່າງ	**ກ** ແລະ **ຂ** ຄູ່ຜົວເມຍ ມີລູກ **ຄ**, **ງ**, **ຈ** ມີສິນສົມສ້າງ ທີ່ດິນນາ 1 ເຮັກຕາ ແລະ ເງິນ 300.000.000 ກີບ, ຕໍ່ມາ **ກ** ແລະ **ຂ** ເກີດອຸບປະຕິເຫດໄດ້ເສຍຊີວິດທັງສອງ. **ຄ**, **ງ**, **ຈ** ຈຶ່ງເປັນຜູ້ສືບທອດມູນມໍຣະດົກຂອງ **ກ** ແລະ **ຂ.**
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 3 ຂໍ້ 7 ຂອງກົດໝາຍວ່າດ້ວຍ ການສືບທອດມູນມໍຣະດົກ ປີ 2008 ໂດຍໃຫ້ຮູ້ວ່າຜູ້ສືບທອດມູນມໍຣະດົກແມ່ນ ຜູ້ສືບທອດທີ່ປະມວນກົດໝາຍແພ່ງໄດ້ກຳນົດໄວ້.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 649 ຂອງປະມວນກົດໝາຍແພ່ງຫວຽດນາມ 2015.

ມາດຕາອ້າງອີງ	ມາດຕາ 565 ແລະ 571 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 573 ກໍລະນີທີ່ພາໃຫ້ມີການສືບທອດມູນມໍຣະດົກຕາມກົດໝາຍ

ການສືບທອດມູນມໍຣະດົກຕາມກົດໝາຍ ຈະມີຂຶ້ນໄດ້ໃນກໍລະນີ ດັ່ງນີ້:

1. ມູນມໍຣະດົກທີ່ບໍ່ໄດ້ເຮັດພິໄນກຳ;
2. ພິໄນກຳເປັນໂມຄະ;
3. ຜູ້ສືບທອດມູນມໍຣະດົກຕາມພິໄນກຳນັ້ນ ໄດ້ເສຍຊີວິດກ່ອນການເປີດການສືບທອດ;
4. ຜູ້ສືບທອດມູນມໍຣະດົກຕາມພິໄນກຳ ຫາກບໍ່ຮັບເອົາການສືບທອດ;
5. ມູນມໍຣະດົກທີ່ຍັງເຫຼືອຈາກການສືບທອດຕາມພິໄນກຳ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນກໍລະນີໃດໜຶ່ງທີ່ພາໃຫ້ມີການສືບທອດມູນມໍຣະດົກຕາມກົດໝາຍ.
ຕົວຢ່າງ	**ກ** ມີລູກ **ຄ**, **ງ** ແລະ **ສ,** ມີທີ່ດິນ 1 ຕອນ ແລະ ເຮືອນ 1 ຫຼັງ, ນາ 1 ຕອນ 5 ເຮັກຕາ, ຄວາຍ 8 ໂຕ, ເງິນຈຳນວນ 50.000.000 ກີບ. **1. ມູນມໍຣະດົກທີ່ບໍ່ໄດ້ເຮັດພິໄນກຳ:** **ກ** ມີລູກ **ຄ**, **ງ** ແລະ **ສ,** ມີທີ່ດິນ 1 ຕອນ ແລະ ເຮືອນ 1 ຫຼັງ, ນາ 1 ຕອນ 5 ເຮັກຕາ, ຄວາຍ 8 ໂຕ, ເງິນຈຳນວນ 50.000.000 ກີບ ໃນນີ້ **ກ** ໄດ້ເຮັດພິໄນກຳມອບທີ່ດິນ ແລະ ເຮືອນ ໃຫ້ **ຄ.** ຕໍ່ມາ **ກ** ໄດ້ເສຍຊີວິດ ດັ່ງນັ້ນ ຊັບທີ່ຍັງເຫຼືອຕ້ອງແບ່ງປັນໃຫ້ **ຄ**, **ງ** ແລະ **ສ** ຕາມກົດໝາຍ. **2. ພິໄນກຳເປັນໂມຄະ:** **ກ** ເຮັດພິໄນກຳ ມອບທີ່ດິນ ແລະ ເຮືອນ ໃຫ້ ຄ ດ້ວຍການບັງຄັບນາບຂູ່ ຕາມຄຳຕັດສິນຂອງສານ ຈຶ່ງເຮັດໃຫ້ພິໄນກຳເປັນໂມຄະ. ດັ່ງນັ້ນ ຊັບທີ່ຍັງເຫຼືອຈຶ່ງຕ້ອງນຳມາແບ່ງປັນໃຫ້ **ຄ**, **ງ** ແລະ ສ ຕາມກົດໝາຍ. **3. ຜູ້ສືບທອດຕາມພິໄນກຳນັ້ນໄດ້ເສຍຊີວິດກ່ອນການເປີດການສືບທອດ:** ກ ໄດ້ເຮັດພິໄນກຳ ມອບທີ່ດິນ ແລະ ເຮືອນ ໃຫ້ **ຄ.** ແຕ່ **ຄ** ໄດ້ເສຍຊີວິດ ກ່ອນ **ກ** ດັ່ງນັ້ນ ທີ່ດິນ ແລະ ເຮືອນ ຈຶ່ງຕ້ອງນຳມາແບ່ງປັນໃຫ້ **ງ** ແລະ **ສ** ຕາມກົດໝາຍ. **4. ຜູ້ສືບທອດມູນມໍຣະດົກຕາມພິໄນກຳບໍ່ຮັບເອົາການສືບທອດ:** **ກ** ໄດ້ເຮັດພິໄນກຳມອບທີ່ດິນ ແລະ ເຮືອນ ໃຫ້ **ຄ**, ພາຍຫຼັງ **ກ** ໄດ້ເສຍຊີວິດ ຈຶ່ງມີການເປີດການສືບທອດ ແຕ່ **ຄ** ປະຕິເສດບໍ່ຮັບເອົາ ການສືບທອດ ດັ່ງນັ້ນ ທີ່ດິນ ແລະ ເຮືອນດັ່ງກ່າວ ຈຶ່ງໄດ້ນຳມາແບ່ງປັນ ຕາມກົດໝາຍ. **5. ມູນມໍຣະດົກທີ່ຍັງເຫຼືອຈາກການສືບທອດຕາມພິໄນກຳ:** ມູນມໍຣະດົກທີ່ຍັງເຫຼືອ ຈາກ ຂໍ້ 1 ຫາ ຂໍ້ 4 ເທິງນີ້ ຈຶ່ງໃຫ້ນຳມາແບ່ງປັນ ຕາມກົດໝາຍ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 9 ຂໍ້ 2 ຂອງກົດໝາຍວ່າດ້ວຍການສືບທອດມູນມໍຣະດົກ ປີ 2008 ໂດຍໃນ ຂໍ້ 1 ມາດຕາດັ່ງກ່າວໄດ້ຕັດຄຳເວົ້າທີ່ວ່າ ໃຫ້ບຸກຄົນໃດ ນັ້ນອອກ ພ້ອມທັງແຍກຂໍ້ 2 ຂອງມາດຕາດັ່ງອອກມາເປັນ ຂໍ້ທີ່ 2 ແລະ 3 ໃນມາດຕານີ້ ເພື່ອໃຫ້ມີຄວາມເຂົ້າໃຈງ່າຍ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 650 ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2015; ມາດຕາ 995, 994, 986 ແລະ 987 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.

ມາດຕາອ້າງອີງ	ມາດຕາ 22,25, 592, 598 ແລະ 602 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 574 ຜູ້ສືບທອດມູນມໍຣະດົກຕາມກົດໝາຍ

ຜູ້ສືບທອດມູນມໍຣະດົກຕາມກົດໝາຍ ມີດັ່ງນີ້:

1. ລູກຄົງ, ລູກລ້ຽງ, ລູກນ້າ ຂອງເຈົ້າມູນມໍຣະດົກ ລວມທັງເດັກຢູ່ໃນທ້ອງຂອງຜູ້ເປັນແມ່ກໍມີສິດສືບທອດມູນມໍຣະດົກເຊັ່ນດຽວກັນແມ່ເປັນຜູ້ຄຸ້ມຄອງພູດຂອງຜູ້ກ່ຽວໄວ້;
2. ພີ່ນ້ອງ ຫຼື ເມຍ ຂອງເຈົ້າມູນມໍຣະດົກທີ່ຍັງມີຊີວິດຢູ່;
3. ພໍ່, ແມ່, ປ่ູ, ຍ່າ, ພໍ່ເຖົ້າ, ແມ່ເຖົ້າ, ທວດ ຂອງເຈົ້າມູນມໍຣະດົກ;
4. ອ້າຍ, ເອື້ອຍ, ນ້ອງ, ລຸງ, ປ້າ, ອາວ, ອາ, ນ້າບ່າວ, ນ້າສາວ, ຫຼານ, ເຫຼນ ຂອງເຈົ້າມູນມໍຣະດົກ;
5. ລັດ ຫຼື ນິຕິບຸກຄົນ ຫຼື ບຸກຄົນອື່ນ ທີ່ໄດ້ກຳນົດໄວ້ໃນປະມວນກົດໝາຍສະບັບນີ້.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນວ່າມີບຸກຄົນ ຫຼື ນິຕິບຸກຄົນໃດແດ່ທີ່ສາມາດສືບທອດມູນມໍຣະດົກຕາມກົດໝາຍໄດ້.
ຕົວຢ່າງ	**1. ກ** ແລະ **ຂ** ມີລູກ **ຄ.** ຕໍ່ມາ **ຂ** ເສຍຊີວິດ **ກ** ແຕ່ງດອງໃໝ່ກັບ **ງ**, ຊຶ່ງ **ງ** ມີລູກຕິດ **ຈ** ແລະ **ງ** ເອົາ **ສ** ມາເປັນລູກລ້ຽງ, **ກ** ມີຊັບເດີມເງິນຈຳນວນ 100.000.000 ກີບ, ເວລາ **ກ** ເສຍຊີວິດ**ງ** ໄດ້ຖືພາມີລູກ 6 ເດືອນ ຄື **ຊ**, **ຄ**, **ຈ**, **ສ** ແລະ **ຊ** ແມ່ນຜູ້ສືບທອດມູນມໍຣະດົກຕາມກົດໝາຍຂອງ **ກ**; **2. ກ** ແລະ **ຂ** ແຕ່ງດອງກັນ, ມີສິນສົມສ້າງຄື: ທີ່ດິນ ແລະ ເຮືອນ, ເງິນສົດຈຳນວນ 200.000.000 ກີບ, ບໍ່ມີລູກນຳກັນ, **ກ** ບໍ່ມີພໍ່ແມ່, ອ້າຍເອື້ອຍ, ນ້ອງ. **ກ** ເສຍຊີວິດ, **ຂ** ຈະເປັນຜູ້ສືບທອດມູນມໍຣະດົກ ຂອງ **ກ** ຕາມກົດໝາຍ; **ກ** ບ່າວໂສດມີຊັບສົມບັດຄື: ທີ່ດິນ ແລະ ເຮືອນ 1 ຫຼັງ, ເງິນຈຳນວນ 200.000.000 ກີບ, ຕໍ່ມາ **ກ** ເສຍຊີວິດ ໃນ ພໍ່ແມ່ ຂອງ **ກ** ທີ່ຍັງມີຊີວິດຢູ່ ເປັນຜູ້ສືບທອດມູນມໍຣະດົກ ຂອງ **ກ** ຕາມກົດໝາຍ; **ກ** ບ່າວໂສດມີຊັບສົມບັດຄື: ທີ່ດິນ ແລະ ເຮືອນ 1 ຫຼັງ, ເງິນຈຳນວນ 200.000.000 ກີບ, **ກ** ມີນ້ອງຊາຍ 2 ຄົນ, ຕໍ່ມາ **ກ** ເສຍຊີວິດ, **ກ** ບໍ່ຜູ້ສືບທອດ ຕາມຂໍ້ທີ່ກຳນົດໃນຂໍ້ 1, ຂໍ້ 2, ແລະ ຂໍ້ 3, ນ້ອງຊາຍທັງ 2 ຄົນຂອງ **ກ** ເປັນຜູ້ສືບທອດມູນມໍຣະດົກ ຂອງ **ກ** ຕາມກົດໝາຍ. **ຂ** ເປັນຜູ້ຮັບໃຊ້ຂອງ **ກ** ທີ່ເປັນຫົວໜ້າຄອບຄົວ ເປັນເວລາ 10 ປີ, **ກ** ມີຊັບສົມບັດຄື: ທີ່ດິນ ແລະ ເຮືອນ 1 ລັງ ເງິນຈຳນວນ 100.000.000 ກີບ, ເວລາ **ກ** ເສຍຊີວິດ,**ກ** ບໍ່ມີຜູ້ສືບທອດມູນມໍຣະດົກຕາມທີ່ກຳນົດໄວ້ທີ່ຢູ່ໃນ ຂໍ້ 1 ຂໍ້ 4, **ຂ** ຜູ້ຮັບໃຊ້ຂອງ **ກ** ຈະເປັນຜູ້ສືບທອດມູນມໍຣະດົກຕາມກົດໝາຍ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 10 ຂອງກົດໝາຍວ່າດ້ວຍ ການສືບທອດມູນມໍຣະດົກ ປີ 2008 ປັບປຸງ ຄຳສັບທີ່ວ່າ ຜູ້ເສຍຊີວິດ ມາເປັນ ເຈົ້າມູນມໍຣະດົກ ,ເພີ່ມ ປະໂຫຍກທີ່ວ່າ ເດັກທີ່ຢູ່ໃນທ້ອງຂອງຜູ້ເປັນແມ່ ກໍມີສິດສືບທອດມູນມໍຣະດົກ ເຊັ່ນດຽວກັນ ແມ່ເປັນຜູ້ຄຸ້ມຄອງພູດຂອງຜູ້ກ່ຽວໄວ້ຢູ່ໃນຕອນທ້າຍຂອງ ຂໍ້ 1 ເພື່ອ ໃຫ້ສອດຄ່ອງກັບ ມາດຕາ 63 ໃນກໍລະນີຍົກເວັ້ນຂອງປະມວນກົດໝາຍແພ່ງ ພ້ອມທັງປັບປຸງກຳນົດຜູ້ສືບທອດຕາມກົດໝາຍຂອງເຈົ້າມູນມໍຣະດົກໃນຂໍ້ 4 ໃຫ້ ຮອດພຽງແຕ່ ເຫຼນ ຈາກກົດໝາຍວ່າດ້ວຍ ການສືບທອດມູນມໍຣະດົກ ປີ 2008 ກຳນົດຮອດ ຫຼອນ ເຫັນວ່າບໍ່ທັນເໝາະສົມ.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງ ຂອງປະເທດອື່ນ	ມາດຕາ 721, 886 ແລະ 965 (ກ່ຽວກັບລູກທີ່ຢູ່ໃນທ້ອງ) ຂອງປະມວນກົດໝາຍ ແພ່ງຍີ່ປຸ່ນ; ມາດຕາ 887, 889 ແລະ 890 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ; ມາດຕາ 651 ຂອງປະມວນກົດໝາຍແພ່ງຫວຽດນາມ; ມາດຕາ 1156 ແລະ 1160 ຂອງປະມວນກົດໝາຍແພ່ງກຳປູເຈຍ.

ມາດຕາອ້າງອີງ	ມາດຕາ 63, 139, 571 ແລະ 574 ຂອງປະມວນກົດໝາຍແພ່ງ; ມາດຕາ 20 ຂໍ້ ຂອງກົດໝາຍວ່າດ້ວຍການພັດທະນາ ແລະ ການປົກປ້ອງແມ່ຍິງ 2004 (ກ່ຽວກັບລູກທີ່ຢູ່ໃນທ້ອງ).
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 575 ລຳດັບໃນການຮັບມູນມໍຣະດົກ

ໃນການແບ່ງປັນມູນມໍຣະດົກໃຫ້ຜູ້ສືບທອດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 574 ຂອງປະມວນກົດໝາຍສະບັບນີ້ ຖ້າຜູ້ໃດຫາກເປັນຍາດຊຶ້ນຈຳກັບເຈົ້າມູນມໍຣະດົກ ກໍຈະແມ່ນຜູ້ນັ້ນເປັນຜູ້ໄດ້ຮັບກ່ອນ. ສ່ວນຜູ້ທີ່ຢູ່ລຳດັບໃກ້ຊິດຖັດໄປນັ້ນ ຈະໄດ້ຮັບກໍຕໍ່ເມື່ອຫາກບໍ່ມີຍາດຊຶ້ນຈຳຂອງເຈົ້າມູນມໍຣະດົກເທົ່ານັ້ນ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນວ່າບຸກຄົນຫຼືນິຕິບຸກຄົນໃດຈະມີບູລິມະສິດສືບທອດມູນມໍຣະດົກຕາມກົດໝາຍ.
ຕົວຢ່າງ	**ກ** ແລະ **ຂ** ຄູ່ຜົວເມຍ, ມີລູກຮ່ວມກັນ 2 ຄົນ, **ກ** ແລະ **ຂ** ມີສິນສົມສ້າງຮ່ວມກັນຄື: ເຮືອນໜຶ່ງຫຼັງ ພ້ອມທີ່ດິນໜຶ່ງຕອນ ແລະ ເງິນໃນບັນຊີຈຳນວນ 20.000.000 ກີບ, ຕໍ່ມາ **ກ** ໄດ້ເສຍຊີວິດ, ສະນັ້ນ, ລຳດັບໃນການສືບທອດມູນມໍຣະດົກຂອງ **ກ** ແມ່ນເມຍ ແລະ ລູກ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກມາດຕາ 11 ຂອງກົດໝາຍວ່າດ້ວຍການສືບທອດມູນມໍຣະດົກ ປີ 2008 ໂດຍໄດ້ປັບປຸງມາດຕາທີ່ໄດ້ອ້າງອີງເຖິງນັ້ນ ໃຫ້ສອດຄ່ອງກັບປະມວນກົດໝາຍແພ່ງ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 573 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 576 ການແບ່ງປັນມູນມໍຣະດົກລະຫວ່າງຜົວຫຼືເມຍທີ່ຍັງມີຊີວິດຢູ່ແລະລູກ

ໃນກໍລະນີທີ່ຜົວ ຫຼື ເມຍຫາກໄດ້ເສຍຊີວິດໄປ ໂດຍໄດ້ປະເມຍ ຫຼື ຜົວ ແລະ ລູກໄວ້ ກໍແມ່ນລູກເປັນຜູ້ມີສິດຮັບມູນມໍຣະດົກທີ່ເປັນຊັບເດີມຂອງເຈົ້າມູນມໍຣະດົກສາມສ່ວນສີ່ ແລະ ອີກໜຶ່ງສ່ວນສີ່ ແມ່ນເມຍ ຫຼື ຜົວທີ່ຍັງມີຊີວິດຢູ່ ເປັນຜູ້ຮັບ.

ສ່ວນສິນສົມສ້າງນັ້ນ ໃຫ້ແບ່ງເຄິ່ງ ຄື ເຄິ່ງໜຶ່ງໃຫ້ເມຍ ຫຼື ຜົວທີ່ຍັງມີຊີວິດຢູ່ ແລະ ອີກເຄິ່ງໜຶ່ງນັ້ນ ໃຫ້ແບ່ງປັນແກ່ພວກລູກ ເປັນພູດສະເໝີກັນ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນກ່ຽວກັບ ວິທີແບ່ງປັນ ແລະ ອັດຕາສ່ວນຂອງມູນມໍຣະດົກ ລະຫວ່າງ ຜົວຫຼືເມຍທີ່ຍັງມີຊີວິດຢູ່ ແລະ ລູກ, ພ້ອມທັງໃຫ້ຮູ້ວ່າ ຊັບເດີມ ແລະ ສິນສົມສ້າງຈະຖືກແບ່ງປັນໃນອັດຕາສ່ວນທີ່ແຕກຕ່າງກັນ.
ຕົວຢ່າງ	**ກ** ແລະ **ຂ** ຄູ່ຜົວເມຍ ມີລູກ 2 ຄົນ **ຄ** ແລະ **ງ**. **ກ** ມີຊັບເດີມ ເງິນຈຳນວນ 4.000.000 ກີບ ແລະ ມີສິນສົມສ້າງກັບ **ຂ** ເງິນຈຳນວນ 100.000.000 ກີບ, ຕໍ່ມາ **ກ** ເສຍຊີວິດ, ມູນມໍຣະດົກຂອງ **ກ** ນຳມາແບ່ງເປັນແກ່ຜູ້ມີສິດສືບທອດຕາມກົດໝາຍຂອງ **ກ** ຄື: 1. ຊັບເດີມຂອງ **ກ** ເງິນຈຳນວນ 4.000.000 ກີບ ແບ່ງເປັນສີ່ສ່ວນ: ສາມສ່ວນສີ່ ເທົ່າກັບ ເງິນຈຳນວນ 3.000.000 ກີບ **ຄ** ແລະ **ງ** ເປັນຜູ້ໄດ້ຮັບ ,ແລະ ອີກໜຶ່ງສ່ວນສີ່ ເທົ່າກັບ 1.000.000 ກີບ ແມ່ນ **ຂ** ເປັນຜູ້ໄດ້ຮັບ ໜຶ່ງສ່ວນ

	2. ສິນສົມສ້າງ ຂອງ **ກ** ແລະ **ຂ** ເງິນຈຳນວນ 100.000.000 ກີບ, ແບ່ງ ເຄື່ງຄື: ໃຫ້ **ຂ** ເງິນຈຳນວນ 50.000.000 ກີບ ແລະ ອີກເງິນຈຳນວນ 50.000.000 ກີບ ແບ່ງປັນໃຫ້ ແກ່ **ຄ** ແລະ **ງ** ເປັນພູດສະເໝີກັນ ຜູ້ລະ ຈຳນວນ 25.000.000 ກີບ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 12 ຂອງກົດໝາຍວ່າດ້ວຍການສືບທອດມູນ ມໍຣະດົກ ປີ 2008 ໂດຍຍ້າຍເອົາວັກທີ 3 ຂອງມາດຕາດັ່ງກ່າວແລ້ວນຳໄປ ໄວ້ຢູ່ໃນ ວັກ 2 ຂອງມາດຕາ 219 ເພື່ອຄວາມເໝາະສົມ ແລະ ເຂົ້າໃຈງ່າຍ.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງ ຂອງປະເທດອື່ນ	ມາດຕາ 900 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 181 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 577 ການແບ່ງປັນມູນມໍຣະດົກລະຫວ່າງພວກລູກຂອງຜູ້ເສຍຊີວິດ

ການແບ່ງປັນມູນມໍຣະດົກ ລະຫວ່າງພວກລູກຂອງເຈົ້າມູນມໍຣະດົກ ໃຫ້ປະຕິບັດ ດັ່ງນີ້:

1. ຖ້າເຈົ້າມູນມໍຣະດົກ ຫາກມີແຕ່ລູກຄົງເທົ່ານັ້ນ ມູນມໍຣະດົກ ຊຶ່ງເປັນສິນສົມສ້າງ ແລະ ຊັບເດີມທີ່ ຕົກທອດແກ່ພວກກ່ຽວ ກໍໃຫ້ແບ່ງປັນເປັນພູດສະເໝີກັນ, ເວັ້ນເສຍແຕ່ໄດ້ກຳນົດໄວ້ໃນມາດຕາ 576 ຂອງ ປະມວນກົດໝາຍສະບັບນີ້;

2. ຖ້າເຈົ້າມູນມໍຣະດົກ ຫາກມີລູກຄົງ, ລູກລ້ຽງ ແລະ ລູກນ້າ ມູນມໍຣະດົກທີ່ເປັນພູດສິນສົມສ້າງ ຂອງຜູ້ກ່ຽວ ໃຫ້ແບ່ງປັນເປັນພູດສະເໝີກັນຕາມຂໍ້ 1 ຂອງມາດຕານີ້;

3. ລູກລ້ຽງມີສິດໄດ້ຮັບພູດທີ່ເປັນຊັບເດີມຂອງເຈົ້າມູນມໍຣະດົກ ຄືກັນກັບລູກຄົງ. ສຳລັບລູກນ້າ ບໍ່ ມີສິດໄດ້ຮັບພູດທີ່ເປັນຊັບເດີມຂອງພໍ່ນ້າ ຫຼື ແມ່ນ້າທີ່ເສຍຊີວິດ;

4. ລູກລ້ຽງ ບໍ່ມີສິດສືບທອດມູນມໍຣະດົກ ຂອງຜູ້ເປັນພໍ່ແມ່ເດີມຂອງຕົນອີກ, ເວັ້ນເສຍແຕ່ມີພິໄນ ກຳ ຈາກພໍ່ແມ່ເດີມມອບໃຫ້ຕົນເທົ່ານັ້ນ.

ສຳລັບລູກຄົງ, ລູກລ້ຽງ, ລູກນ້າ ທີ່ໄດ້ລ້ຽງດູ, ເບິ່ງແຍງ ແລະ ປົ່ນປົວ ພໍ່ແມ່ຕະຫຼອດຮອດເສຍຊີວິດ ແລະ ມ້ຽນຄາບສົ່ງສະການ ດ້ວຍຕົນເອງ ຫຼື ໂດຍໃຊ້ຊັບຂອງຕົນເອງ ຫຼື ປະກອບສ່ວນໃນການປົກປັກຮັກສາ ແລະ ເຮັດໃຫ້ຊັບຂອງເຈົ້າມູນມໍຣະດົກເພີ່ມຂຶ້ນ ກໍຈະໄດ້ຮັບສ່ວນແບ່ງມູນມໍຣະດົກຂອງເຈົ້າມູນມໍຣະດົກ ຫຼາຍກວ່າຜູ້ສືບທອດຄົນອື່ນໜຶ່ງພູດ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນວ່າລະຫວ່າງລູກຄົງ, ລູກລ້ຽງ ແລະ ລູກນ້າຂອງເຈົ້າມູນ ມໍຣະດົກນັ້ນ, ຜູ້ໃດຈະໄດ້ຮັບມູນມໍຣະດົກເທົ່າໃດ.
ຕົວຢ່າງ	**ລະຫວ່າງລູງຄົງດ້ວຍກັນ: ກ** ມີລູກ 2 ຄົນຄື **ຂ** ແລະ **ຄ. ກ** ມີຊັບສົມບັດ ຄື: ທີ່ດິນ 1 ຕອນ, ເຮືອນ 1 ຫຼັງ ແລະ ເງິນ 2.000.000 ກີບ. **ກ** ເສຍຊີວິດ ມູນມໍຣະດົກຂອງ **ກ** ຕົກທອດໃຫ້ພວກລູກຂອງ **ກ** ແບ່ງປັນເປັນພູດສະເໝີ ກັນ. ລະຫວ່າງ ລູກຄົງ, ລູກລ້ຽງ ແລະ ລູກນ້າ: **ກ** ແຕ່ງດອງກັບ **ຂ** ມີລູກ 4 ຄົນຄື:**ຄ**,**ງ** (ລູກຄົງ) **ຈ (ລູກລ້ຽງ) ແລະ ສ (ລູກນ້າທີ່ຕິດມານຳ ຂ).**, **ກ** ມີຊັບເດີມ 30.000.000 ກີບ, ສິນສົມສ້າງຮ່ວມກັບ **ຂ** ຄື: ເງິນ 10.000.000 ກີບ, ທີ່ດິນ 1 ຕອນ ແລະ ເຮືອນ 1 ຫຼັງ, ຕໍ່ມາ **ກ ແລະ ຂ** ເສຍ ຊີວິດພ້ອມກັນສິນສົມສ້າງຂອງ **ກ** ແລະ **ຂ** ແບ່ງເປັນ 4 ພູດສະເໝີກັນໃຫ້ **ຄ**, **ງ,ຈ** ແລະ **ສ** ຊັບເດີມຂອງ **ກ** ແບ່ງເປັນ 3 ພູດສະເໝີກັນ **ຄ, ງ** ແລະ **ຈ.** ລູກຜູ້ທີ່ລ້ຽງດູ, ເບິ່ງແຍງ ແລະ ປົ່ນປົວພໍ່ແມ່ຕະຫຼອດຮອດເສຍຊີວິດ ແລະ ມ້ຽນຄາບສົ່ງສະການ: **ກ** ມີລູກ 3 ຄົນຄື **ຂ (ລູກຄົງ)**, **ຄ (ລູກລ້ຽງ)**, ແລະ

	ງ (ລູກນ້ຳ), **ກ** ມີຊັບສົມບັດຄື: ທີ່ດິນ 1 ຕອນ, ເຮືອນ 1 ຫຼັງ ແລະ ເງິນ 2.000.000 ກີບ. **ຂ** ໄດ້ເບິ່ງແຍງປົ່ນປົວ **ກ** ປະຈຳວັນຈົນຮອດຍາມ **ກ** ເສຍຊີວິດກໍໄດ້ມ້ຽນຄາບສົ່ງສະການດ້ວຍການນຳໃຊ້ເງິນຂອງ **ຂ** ເອງ, ໃນເວລາເປີດການສືບທອດມູນມໍຣະດົກຂອງ **ກ**, **ຂ** ຈະໄດ້ຮັບສ່ວນແບ່ງປັນມູນມໍຣະດົກຂອງ **ກ** ຫຼາຍກວ່າ **ຄ** ແລະ **ງ** ໜຶ່ງພູດ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກມາດຕາ 15 ຂອງກົດໝາຍວ່າດ້ວຍການສືບທອດມູນມໍຣະດົກ ປີ 2008ໃນວັກສຸດທ້າຍໄດ້ເພີ່ມປະໂຫຍກທີ່ວ່າ"ດ້ວຍຕົນເອງຫຼືໂດຍໃຊ້ຊັບຂອງຕົນເອງ ຫຼື ປະກອບສ່ວນໃນການປົກປັກຮັກສາ ແລະ ເຮັດໃຫ້ຊັບຂອງເຈົ້າມູນມໍຣະດົກເພີ່ມຂຶ້ນ. ເນື່ອງຈາກເຫັນວ່າ ຕາມສະພາບການຕົວຈິງຂອງສັງຄົມປັດຈຸບັນທີ່ລູກບາງຄັ້ງບໍ່ມີເວລາເບິ່ງແຍງພໍ່ແມ່ (ເຈົ້າມູນ)ແຕ່ໄດ້ໃຊ້ຊັບຂອງຕົນເພື່ອໃຫ້ແພດປົ່ນປົວ ຫຼື ຈ້າງຄົນອື່ນມາເບິ່ງແຍງໃນທຸກສະຖານະການ,ການກະທຳດັ່ງກ່າວຄວນຖືກຍົກຂຶ້ນຖືໃຫ້ເປັນການເບິ່ງແຍງອີກປະເພດໜຶ່ງເທົ່າທຽມກັບການເບິ່ງແຍງດ້ວຍຕົນເອງ, ເຊັ່ນດຽວກັບການປົກປັກຮັກສາ ແລະ ເຮັດໃຫ້ຊັບຂອງເຈົ້າມູນມໍຣະດົກເພີ່ມຂຶ້ນບໍ່ວ່າຈະດ້ວຍການນຳໃຊ້ເຫື່ອແຮງ, ສະຕິປັນຍາຂອງຕົນ ຫຼື ໃຊ້ຊັບຂອງຕົນກໍຕາມ. ການກະທຳດັ່ງກ່າວລ້ວນແຕ່ເປັນການສະແດງເຖິງເຈດຕະນາທີ່ດີຕໍ່ເຈົ້າມູນມໍຣະດົກ ແລະ ຜູ້ທີ່ໄດ້ກະທຳລັກສະນະດັ່ງກ່າວຄວນໄດ້ຮັບມູນມໍຣະດົກເກີນກວ່າຄົນອື່ນຕາມພູດທີ່ຕົນມີສິດ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມດຕານີ້ ວັກ 1: ມາດຕາ 900 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ; ມາດຕານີ້ວັກ 2: ມາດຕາ 904/2 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 574 ຂໍ້1 ແລະ 576 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 578 ການແບ່ງປັນມູນມໍຣະດົກລະຫວ່າງຜົວຫຼື ເມຍທີ່ຍັງມີຊີວິດຢູ່ແລະຍາດສາຍຕັ້ງ

ໃນກໍລະນີທີ່ຜົວ ຫຼື ເມຍຊຶ່ງບໍ່ມີລູກ ຫາກໄດ້ເສຍຊີວິດໄປຍັງເຫຼືອແຕ່ເມຍ ຫຼື ຜົວ ແລະ ຍາດສາຍຕັ້ງ ການແບ່ງປັນມູນມໍຣະດົກໃຫ້ປະຕິບັດ ດັ່ງນີ້:

1. ເມຍ ຫຼື ຜົວທີ່ຍັງມີຊີວິດ ຈະໄດ້ຮັບສ່ວນແບ່ງປັນໜຶ່ງສ່ວນສາມຂອງຊັບເດີມຂອງເຈົ້າມູນມໍຣະດົກ ແລະ ອີກສອງສ່ວນສາມນັ້ນ ໃຫ້ຍາດສາຍຕັ້ງ ເບື້ອງເທິງ ຊັ້ນຈຳຂອງເຈົ້າມູນມໍຣະດົກເປັນຜູ້ສືບທອດ ເປັນພູດສະເໝີກັນ;
2. ເມຍ ຫຼື ຜົວທີ່ຍັງມີຊີວິດຢູ່ນັ້ນ ຈະໄດ້ຮັບສິນສົມສ້າງ ທີ່ເປັນພູດຂອງຜູ້ເສຍຊີວິດທັງໝົດ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນວ່າລະຫວ່າງຜົວຫຼືເມຍບໍ່ມີລູກແລະ ມີແຕ່ຍາດສາຍຕັ້ງ ຂອງເຈົ້າມູນມໍຣະດົກນັ້ນ, ຜູ້ໃດຈະໄດ້ຮັບພູດຂອງມູນມໍຣະດົກເທົ່າໃດ.
ຕົວຢ່າງ	**ກ** ແລະ **ຂ** ຄູ່ຜົວເມຍບໍ່ມີລູກ, **ກ** ມີພໍ່ແມ່ທີ່ຍັງບໍ່ທັນເສຍຊີວິດ, **ກ** ມີຊັບເດີມ ເງິນ ຈຳນວນ 4.000.000 ກີບ ແລະ ສິນສົມສ້າງ ເງິນຈຳນວນ 2.000.000 ກີບ. ເມື່ອ **ກ** ເສຍຊີວິດມູນມໍຣະດົກຂອງ **ກ** ແບ່ງປັນດັ່ງນີ້: 1. ຊັບເດີມຂອງ **ກ** ແບ່ງເປັນ 3 ພູດສະເໝີກັນ, 2 ພູດໃຫ້ກັບພໍ່ແມ່ຂອງ ກ ແລະ 1 ພູດໃຫ້**ຂ.** 2. ສ່ວນພູດສິນສົມສ້າງຂອງ **ກ** ແລະ **ຂ** ນັ້ນ, **ຂ** ຈະໄດ້ຮັບຄົນດຽວ.
ເຫດຜົນໃນການປັບປຸງ	ມາດຕານີ້ໄດ້ປັບປຸງມາຈາກ ມາດຕາ 13 ຂອງກົດໝາຍວ່າດ້ວຍການສືບທອດມູນມໍຣະດົກປີ2008ປັບປຸງຄຳສັບທີ່ວ່າຜູ້ເສຍຊີວິດມາເປັນເຈົ້າມູນມໍຣະດົກ, ສ່ວນຂໍ້ 1 ໄດ້ເພີ່ມປະໂຫຍກຄຳວ່າ ເບື້ອງເທິງຊັ້ນຈຳຂອງ ເຈົ້າມູນມໍຣະດົກເປັນຜູ້ສືບທອດ ເຂົ້າເພື່ອເນັ້ນໜັກຍາດສາຍຕັ້ງ ທີ່ມີນັ້ນໝາຍເຖິງຍາດສາຍຕັ້ງເບື້ອງເທິງຊັ້ນຈຳແລະ ເພື່ອໃຫ້ສອດຄ່ອງກັບມາດຕາ 139 ປະມວນກົດໝາຍແພ່ງ

ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 574 ຂໍ້ 3 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 579 ການແບ່ງປັນມູນມໍຣະດົກລະຫວ່າງຍາດສາຍຕັ້ງ

ໃນກໍລະນີເຈົ້າມູນມໍຣະດົກນັ້ນ ຫາກບໍ່ມີລູກ, ບໍ່ມີຜົວ ຫຼື ເມຍ ມູນມໍຣະດົກທັງໝົດ ໃຫ້ນຳມາແບ່ງປັນ ໃຫ້ຍາດສາຍຕັ້ງຊັ້ນຈຳ ເປັນພູດສະເໝີກັນ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນກ່ຽວກັບ ວິທີການແບ່ງປັນມູນມໍຣະດົກໃນກໍລະນີທີ່ເຈົ້າມູນ ມໍຣະດົກບໍ່ມີຜົວ ຫຼື ເມຍ ແລະ ບໍ່ມີລູກ.
ຕົວຢ່າງ	**ກ** ບ່າວໂສດບໍ່ມີລູກ ອາໄສຢູ່ນຳພໍ່ແມ່ **ກ** ມີຊັບສົມບັດ ເງິນ 100.000.000 ກີບ, ເມື່ອ **ກ** ເສຍຊີວິດມູນມໍຣະດົກຂອງ **ກ** ນຳມາແບ່ງໃຫ້ກັບພໍ່ແມ່ຂອງ **ກ**.
ເຫດຜົນໃນການສ້າງໃໝ່	ມາດຕານີ້ເປັນມາດຕາທີ່ສ້າງໃໝ່ເພື່ອແຍກໃຫ້ເຫັນກ່ຽວກັບການແບ່ງປັນມູນ ມໍຣະດົກຂອງຍາດສາຍຕັ້ງຊັ້ນຈຳຂອງ ເຈົ້າມູນມໍຣະດົກ ຊຶ່ງໃນກົດໝາຍເກົ່າບໍ່ ໄດ້ກຳນົດບັນຫານີ້ໄວ້.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 588 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 580 ການແບ່ງປັນມູນມໍຣະດົກລະຫວ່າງຜົວ ຫຼື ເມຍ ແລະ ຍາດສາຍຂວາງ

ຖ້າເຈົ້າມູນມໍຣະດົກຫາກບໍ່ມີລູກ ແລະ ບໍ່ມີຍາດສາຍຕັ້ງ ແຕ່ຫາກຍັງມີຜົວ ຫຼື ເມຍນັ້ນ, ຍາດສາຍ ຂວາງຊັ້ນຈຳ ຂອງເຈົ້າມູນມໍຣະດົກ ຈະໄດ້ຮັບມູນມໍຣະດົກທີ່ເປັນຊັບເດີມຂອງເຈົ້າມູນມໍຣະດົກ ພຽງແຕ່ ເຄິ່ງໜຶ່ງເທົ່ານັ້ນ, ສ່ວນອີກເຄິ່ງໜຶ່ງ ແລະ ສິນສົມສ້າງທັງໝົດນັ້ນ ຈະຕົກເປັນຂອງເມຍ ຫຼື ຜົວທີ່ຍັງມີຊີວິດຢູ່.

ການແບ່ງປັນມູນມໍຣະດົກ ລະຫວ່າງຍາດສາຍຂວາງຊັ້ນຈຳນັ້ນ ໃຫ້ແບ່ງປັນເປັນພູດສະເໝີກັນ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນກ່ຽວກັບ ວິທີການແບ່ງປັນມູນມໍຣະດົກໃນກໍລະນີທີ່ຜູ້ສືບ ທອດແມ່ນຜົວ ຫຼື ເມຍທີ່ຍັງມີຊີວິດຢູ່ ແລະ ຍາດສາຍຂວາງ.
ຕົວຢ່າງ	**ກ** ແລະ **ຂ** ຄູ່ຜົວເມຍ ບໍ່ມີລູກ, **ຂ** ມີຊັບເດີມ (ທີ່ດິນນາ ໜຶ່ງຕອນ); ທັງສອງ ມີສິນສົມສ້າງຄື: ທີ່ດິນ,ເຮືອນໜຶ່ງຫຼັງ ແລະ ລົດເກງ ສອງຄັນ; ຕໍ່ມາ **ຂ** ໄດ້ເສຍ ຊີວິດ ໂດຍບໍ່ມີຍາດສາຍຕັ້ງ ແຕ່ມີນ້ອງສອງຄົນຄື:**ຄ** ແລະ **ງ** (ຍາດສາຍຂວາງ); ມູນມໍຣະດົກ ຂອງ **ຂ**ໃຫ້ແບ່ງປັນດັ່ງນີ້: ຊັບເດີມ (ທີ່ດິນນາໜຶ່ງຕອນ) ຕ້ອງ ແບ່ງອອກເປັນສອງພູດ ພູດໜຶ່ງມອບໃຫ້ **ຄ** ແລະ **ງ** ຄົນລະເຄິ່ງ, ສ່ວນອີກ ໜຶ່ງພູດ ມອບໃຫ້ **ກ**; ສິນສົມສ້າງ (ທີ່ດິນ, ເຮືອນໜຶ່ງຫຼັງ ແລະ ລົດເກງສອງ ຄັນ) ຕົກເປັນຂອງ **ກ**.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກມາດຕາ 14 ຂອງກົດໝາຍວ່າດ້ວຍການສືບທອດມູນ ມໍຣະດົກປີ 2008 ຍັງບໍ່ຈະແຈ້ງເທົ່າທີ່ຄວນໂດຍສະເພາະຫົວຂໍ້ມາດຕາບໍ່ສອດ ຄ່ອງກັບເນື້ອໃນ ສະນັ້ນ ຈຶ່ງໄດ້ປັບປຸງຫົວຂໍ້ມາດຕາໃຫ້ສອດຄ່ອງກັບເນື້ອໃນ. ເພື່ອຢາກໃຫ້ແບ່ງປັນມູນມໍຣະດົກ ລະຫວ່າງ ຜົວ ຫຼື ເມຍຍັງມີຊີວິດຢູ່ ແລະ ຍາດສາຍຂວາງໃຫ້ຖືກຕ້ອງນັ້ນ ຕ້ອງໄຈ້ແຍກໃຫ້ໄດ້ວ່າຊັບຂອງ ຜູ້ເສຍຊີວິດ ອັນໃດເປັນຊັບເດີມ ແລະ ອັນໃດເປັນສິນສົມສ້າງ ໂດຍນຳໃຊ້ຫຼັກການທີ່ກຳນົດ ໄວ້ໃນມາດຕາ 167 ແລະ 168 ຂອງປະມວນກົດໝາຍແພ່ງ.

ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 167 ແລະ 168 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 581 ການແບ່ງປັນມູນມໍຣະດົກລະຫວ່າງຍາດສາຍຂວາງ

ໃນກໍລະນີເຈົ້າມູນມໍຣະດົກນັ້ນຫາກບໍ່ມີລູກ, ບໍ່ມີຜົວຫຼືເມຍແລະບໍ່ມີຍາດສາຍຕັ້ງ, ມູນມໍຣະດົກຂອງຜູ້ກ່ຽວ ໃຫ້ນຳມາແບ່ງປັນໃຫ້ຍາດສາຍຂວາງຊັ້ນຈຳ ເປັນພູດສະເໝີກັນ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນວິທີ ແລະ ເງື່ອນໄຂຂອງການສືບທອດມູນມໍຣະດົກຂອງຍາດສາຍຂວາງ.
ຕົວຢ່າງ	**ກ** ບ່າວໂສດບໍ່ມີເມຍ, ບໍ່ມີລູກ ແລະ ພໍ່ແມ່, **ກ** ມີເອື້ອຍຄື: **ຄ** ແລະ **ງ**. **ກ** ມີຊັບສົມບັດຄື: ເງິນຈຳນວນ 50.000.000 ກີບ ແລະ ລົດ 1 ຄັນ, **ກ** ເສຍຊີວິດ ມູນມໍຣະດົກຂອງ **ກ** ຈະນຳມາແບ່ງປັນໃຫ້ **ຄ** ແລະ **ງ** ເປັນພູດສະເໝີກັນ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກມາດຕາ 14 ວັກ 2 ຂອງກົດໝາຍວ່າດ້ວຍການສືບທອດມູນມໍຣະດົກ ປີ 2008 ເພື່ອເຮັດໃຫ້ບັນດາຍາດສາຍຂວາງ ຂອງເຈົ້າມູນມໍຣະດົກຮັບຮູ້ເງື່ອນໄຂກ່ຽວກັບການສືບທອດມູນມໍຣະດົກທີ່ຈະໄດ້ຮັບ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 574 ວັກ 4 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 582 ການແບ່ງປັນມູນມໍຣະດົກກໍລະນີມີແຕ່ຜົວ ຫຼື ເມຍ

ໃນກໍລະນີຜົວ ຫຼື ເມຍທີ່ເສຍຊີວິດ ຫາກບໍ່ມີລູກ, ບໍ່ມີຍາດສາຍຕັ້ງ ແລະ ບໍ່ມີຍາດສາຍຂວາງ, ມູນມໍຣະດົກຂອງຜູ້ກ່ຽວ ກໍໃຫ້ເມຍ ຫຼື ຜົວ ທີ່ມີຊີວິດຢູ່ນັ້ນ ເປັນຜູ້ສືບທອດທັງໝົດ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນກ່ຽວກັບ ການສືບທອດມູນມໍຣະດົກໃນກໍລະນີທີ່ເຈົ້າມູນມໍຣະດົກມີແຕ່ຜົວ ຫຼື ເມຍ ບໍ່ມີຜູ້ສືບທອດອື່ນທີ່ກຳນົດໄວ້ໃນມາດຕາ 574.
ຕົວຢ່າງ	**ກ** ແລະ **ຂ** ຄູ່ຜົວເມຍ, ພວກກ່ຽວບໍ່ມີລູກ, ບໍ່ມີຍາດສາຍຕັ້ງ ແລະ ຍາດສາຍຂວາງ, **ກ** ແລະ **ຂ** ມີສິນສົມສ້າງທີ່ດິນໜຶ່ງຕອນ ແລະ ເຮືອນໜຶ່ງຫຼັງ, ເງິນຈຳນວນ 50.000.000 ກີບ ແລະ ລົດຈັກ 1 ຄັນ, ຕໍ່ມາ **ກ** ໄດ້ເສຍຊີວິດ ມູນມໍຣະດົກຂອງ **ກ** ນັ້ນແມ່ນ **ຂ** ເປັນຜູ້ສືບທອດທັງໝົດ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງຂຶ້ນໃໝ່ ເພາະວ່າກົດໝາຍວ່າດ້ວຍການສືບທອດມູນມໍຣະດົກ ປີ 2008 ບໍ່ໄດ້ກຳນົດກ່ຽວກັບການແບ່ງປັນມູນມໍຣະດົກກໍລະນີ ມີແຕ່ຜົວ ຫຼື ເມຍ ຍັງມີຊີວິດຢູ່ ໂດຍບໍ່ມີຍາດສາຍຕັ້ງ ແລະ ຍາດສາຍຂວາງ, ເພື່ອເຮັດໃຫ້ການແບ່ງປັນມູນມໍຣະດົກແກ່ ຜູ້ສືບທອດ ຄົບຖ້ວນ ແລະ ຮັດກຸມ ຈຶ່ງກຳນົດມາດຕານີ້ເຂົ້າຕື່ມ
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 572 ແລະ 589 ຂອງປະມວນກົດໝາຍແພ່ງ; ມາດຕາ 574 ຂໍ້ 2 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 583 ການແບ່ງປັນມູນມໍຣະດົກ ລະຫວ່າງຫົວໜ້າຄອບຄົວ ແລະ ຜູ້ຮັບໃຊ້

ຖ້າຫົວໜ້າຄອບຄົວຫາກໄດ້ເສຍຊີວິດ ໂດຍບໍ່ມີ ພີ່ ຫຼື ເມຍ, ລູກ, ຍາດສາຍຕັ້ງ ແລະ ຍາດສາຍຂວາງ ແລ້ວ, ຜູ້ຮັບໃຊ້ທີ່ຢູ່ໃນຄອບຄົວນັ້ນ ແຕ່ສາມປີຂຶ້ນໄປ ກໍຈະໄດ້ສືບທອດມູນມໍຣະດົກນັ້ນ.

ຖ້າຜູ້ຮັບໃຊ້ຫາກໄດ້ເສຍຊີວິດ ໂດຍບໍ່ມີຜູ້ສືບທອດມູນມໍຣະດົກຂອງຕົນ ຕາມທີ່ໄດ້ກຳນົດໃນວັກທີໜຶ່ງ ຂອງມາດຕານີ້ແລ້ວ ຫົວໜ້າຄອບຄົວກໍຈະໄດ້ສືບທອດມູນມໍຣະດົກຂອງຜູ້ຮັບໃຊ້ເຊັ່ນດຽວກັນ.

ຖ້າເຈົ້າມູນມໍຣະດົກ ຫາກບໍ່ມີພີ່ ຫຼື ເມຍ, ລູກ, ຍາດສາຍຕັ້ງ ແລະ ຍາດສາຍຂວາງ ແຕ່ມີບຸກຄົນໃດໜຶ່ງ ໄດ້ເບິ່ງແຍງຊ່ວຍເຫຼືອເຈົ້າມູນມໍຣະດົກຈົນເສຍຊີວິດ ແລະ ມ້ຽນຄາບສົ່ງສະການ ບຸກຄົນນັ້ນ ອາດມີສິດສືບທອດມູນມໍຣະດົກ ຕາມການຕັດສິນຂອງສານ.

ຈຸດປະສົງ	ເພື່ອຢາກໃຫ້ ຫົວໜ້າຄອບຄົວ ແລະ ຜູ້ຮັບໃຊ້ເຂົ້າໃຈເງື່ອນໄຂ ການສືບທອດມູນມໍຣະດົກ ໃນກໍລະນີ ພວກກ່ຽວຫາກບໍ່ມີຜູ້ສືບທອດ.
ຕົວຢ່າງ	**1. ກ** ເປັນຜູ້ຮັບໃຊ້ຂອງ**ຂ** ຜູ້ເປັນຫົວໜ້າຄອບຄົວ ໄດ້ 5 ປີ. **ຂ** ມີທີ່ດິນນາ ແລະ ເຮືອນ 1 ຫຼັງ. **ຂ** ໄດ້ເສຍຊີວິດໂດຍບໍ່ມີເມຍບໍ່ມີລູກ, ບໍ່ມີທັງຍາດສາຍຕັ້ງ ແລະ ຍາດສາຍຂວາງ. ສະນັ້ນ **ກ** ທີ່ເປັນຜູ້ຮັບໃຊ້ຂອງ **ຂ** ຈຶ່ງຈະເປັນຜູ້ສືບມູນມໍຣະດົກທອດທີ່ດິນ ແລະ ເຮືອນ ຊຶ່ງເປັນມູນມໍ່ຣະດົກຂອງ **ຂ**. **2. ກ** ເປັນຜູ້ຮັບໃຊ້ຂອງ **ຂ** ກາຍ 5 ປີແລ້ວ, ຕໍ່ມາ **ກ** ໄດ້ເສຍຊີວິດ ໂດຍບໍ່ມີເມຍ ບໍ່ມີລູກ ແລະ ບໍ່ມີຍາດສາຍຕັ້ງ ແລະ ຍາດສາຍຂວາງ. ສະນັ້ນ **ຂ** ຈຶ່ງຈະໄດ້ສືບທອດລົດເກັ່ງ 1 ຄັນ ຊຶ່ງເປັນມູນມໍ່ຣະດົກຂອງ **ກ**. **3. ຄ** ເປັນຜູ້ເບິ່ງແຍງຊ່ວຍເຫຼືອ **ຂ** ຈົນຮອດມື້ **ຂ** ເສຍຊີວິດ ໂດຍ **ຂ** ບໍ່ມີເມຍ, ບໍ່ມີລູກ, ບໍ່ມີຍາດສາຍຕັ້ງ ແລະ ຍາດສາຍຂວາງ. ຫຼັງຈາກເສຍຊີວິດແລ້ວ **ຄ** ກໍໄດ້ມ້ຽນຄາບສົ່ງສະການ ສະນັ້ນ **ຄ** ຈຶ່ງມີສິດສືບທອດມູນມໍ່ຣະດົກຂອງ **ຂ** ຕາມຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກມາດຕາ 17 ຂອງກົດໝາຍວ່າດ້ວຍການສືບທອດມູນມໍ່ຣະດົກ ປີ 2008 ບໍ່ໄດ້ກຳນົດກ່ຽວກັບ ເຈົ້າມູນມໍ່ຣະດົກບໍ່ມີ ຜູ້ຮັບໃຊ້ ແຕ່ມີ ຜູ້ເບິ່ງລ້ຽງດູ ອາດໃຫ້ ຜູ້ກ່ຽວສືບທອດ ມູນມໍ່ຣະດົກຂອງຫົວໜ້າຄອບຄົວ ຕາມຄຳຕັດສິນຂອງສານ ສະນັ້ນ ຈຶ່ງໄດ້ປັບປຸງມາດຕານີ້ຕື່ມ ໃຫ້ຮັດກຸມ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ985/3, 1050 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 584 ມູນມໍ່ຣະດົກຂອງພິກຂຸ, ສາມະເນນ ຫຼື ນັກບວດອື່ນ

ພິກຂຸ, ສາມະເນນ ຫຼື ນັກບວດອື່ນທີ່ມີຊັບກ່ອນບວດຫຼືມີຊັບໃນໄລຍະບວດນັ້ນແມ່ນມີສິດມອບຊັບ, ຍົກຊັບ ຫຼື ເຮັດພິໄນກຳໃຫ້ບຸກຄົນ ຫຼື ການຈັດຕັ້ງອື່ນຕາມກົດໝາຍລວມທັງມີສິດໃຫ້ຜູ້ອື່ນສືບທອດມູນມໍ່ຣະດົກຂອງຕົນ.

ໃນກໍລະນີທີ່ພິກຂຸ, ສາມະເນນ ຫຼື ນັກບວດອື່ນຫາກໄດ້ເສຍຊີວິດໂດຍບໍ່ມີຜູ້ສືບທອດມູນມໍ່ຣະດົກ ຕາມທີ່ໄດ້ກຳນົດໃນມາດຕາ 585 ວັກທີໜຶ່ງ ຂອງປະມວນກົດໝາຍສະບັບນີ້ ຫຼື ບໍ່ໄດ້ມອບຊັບໃດໜຶ່ງໃຫ້ບຸກຄົນ, ການຈັດຕັ້ງຫຼືມູນນິທິໃດໜຶ່ງແລ້ວ,ຊັບທັງໝົດນັ້ນກໍຈະຕົກເປັນຂອງວັດ ຫຼື ສາສະນະສະຖານບ່ອນຜູ້ກ່ຽວຢູ່ປະຈຳ.

ຈຸດປະສົງ	ເພື່ອໃຫ້ເຫັນຄວາມໝາຍຂອງພິກຂຸ, ສາມະເນນຫຼືນັກບວດອື່ນທີ່ມີຊັບກ່ອນບວດຫຼືມີຊັບໃນໄລຍະບວດກຳນົດຫຼັກການມອບຊັບ, ຍົກຊັບຫຼືເຮັດພິໄນກຳໃຫ້ຜູ້ອື່ນສືບທອດມູນມໍ່ຣະດົກຂອງຕົນຕາມກົດໝາຍ ມີຄວາມຊັດເຈນຂຶ້ນ.

ຕົວຢ່າງ	**1. ກ** ເປັນພີກຂຸ ຢູ່ວັດ **ຂ.** ກ່ອນເຂົ້າບວດ **ກ** ມີທີ່ດິນ 1 ຕອນ ແລະ ພາຍ ຫຼັງເຂົ້າບວດໄດ້ຮັບເງິນຈຳນວນ 1.000.000 ກີບ ຈາກຄົນຮູ້ຈັກ. ໃນໄລຍະມີຊີວິດຢູ່ໄດ້ຂຽນພິໄນກຳເອົາຊັບສິນທັງໝົດມອບໃຫ້ **ຄ** ທີ່ເປັນລູກ. **2. ກ** ເປັນພີກຂຸ ຢູ່ວັດ **ງ** ໄດ້ມໍຣະນະພາບ (ເສຍຊີວິດ)ໂດຍບໍ່ມີຜູ້ສືບທອດມູນມໍຣະດົກ ຫຼື ບໍ່ໄດ້ມອບຊັບໃຫ້ບຸກຄົນຫຼືການຈັດຕັ້ງອື່ນ. ຊັບຂອງ **ກ** ຈະຕົກເປັນຂອງວັດ **ງ.** **3. ກ** ເປັນນັກບວດຂອງສາສະໜາອື່ນ (ບໍ່ແມ່ນສາສະໜາພຸດ) ໄດ້ເສຍຊີວິດໂດຍບໍ່ມີຜູ້ສືບທອດມູນມໍຣະດົກ ຫຼື ບໍ່ໄດ້ມອບຊັບໃຫ້ບຸກຄົນ ຫຼື ການຈັດຕັ້ງອື່ນ. ຊັບຂອງ **ກ** ຈະຕົກເປັນຂອງສາສະນະສະຖານ ບ່ອນ **ກ** ຢູ່ປະຈຳ.
ເຫດຜົນໃນການຮັກສາເດີມ	ມາດຕານີ້ຮັກສາເນື້ອໃນເດີມມາດຕາ 19 ຂອງກົດໝາຍວ່າດ້ວຍການສືບທອດມູນມໍຣະດົກ ປີ 2008.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ສືບຕໍ່ຄົ້ນຄ້ວາ.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ

ມາດຕາ 585 ມູນມໍຣະດົກທີ່ບໍ່ມີຜູ້ສືບທອດອື່ນ

ເມື່ອບຸກຄົນໃດໜຶ່ງຫາກໄດ້ເສຍຊີວິດໂດຍບໍ່ມີຜູ້ສືບທອດມູນມໍຣະດົກ ຫຼື ບໍ່ຮູ້ວ່າຜູ້ສືບທອດນັ້ນຢູ່ໃສ ພາຍໃນເວລາຫົກເດືອນຖ້າບໍ່ມີຜູ້ໃດມາທວງເອົາແລ້ວ,ມູນມໍຣະດົກທັງໝົດນັ້ນແມ່ນລັດເປັນຜູ້ຄຸ້ມຄອງໄວ້.

ຖ້າຫາກໝົດອາຍຸຄວາມ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 608 ຂອງປະມວນກົດໝາຍສະບັບນີ້ແລ້ວ, ມູນມໍຣະດົກດັ່ງກ່າວ ກໍຈະຕົກເປັນກຳມະສິດຂອງລັດ.

ນາຍທະບຽນສານຫຼືນາຍບ້ານເປັນຜູ້ກຳນົດເອົາຊັບສົມບັດສ່ວນໃດໜຶ່ງຂອງເຈົ້າມູນມໍຣະດົກເພື່ອໃຊ້ຈ່າຍເຂົ້າໃນການມ້ຽນຄາບສົ່ງສະການ, ເຮັດບຸນກິນທານຕາມຮີດຄອງ ແລະ ຊຳລະໜີ້ສິນຂອງຜູ້ເສຍຊີວິດ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນກ່ຽວກັບ ລະບຽບການ ໃນການຄຸ້ມຄອງ ແລະ ການສືບທອດມູນມໍຣະດົກໃນກໍລະນີທີ່ຜູ້ເສຍຊີວິດ ບໍ່ມີຜູ້ສືບທອດ ຫຼື ບໍ່ຮູ້ວ່າມີ ຫຼື ບໍ່ມີຜູ້ສືບທອດ ຫຼື ບໍ່ຮູ້ບ່ອນຢູ່.
ຕົວຢ່າງ	**ກ** ເສຍຊີວິດ ແລະ ບໍ່ມີຜູ້ສືບທອດມູນມໍຣະດົກ ຫຼື ບໍ່ຮູ້ວ່າຜູ້ສືບທອດແມ່ນໃຜ. ນັບແຕ່ເສຍຊີວິດເປັນເວລາ 6 ເດືອນ ບໍ່ມີໃຜມາທວງທາວເອົາ ມູນມໍຣະດົກຂອງ **ກ** ອົງການປົກຄອງບ້ານ ຕາງໜ້າລັດເປັນຜູ້ຄຸ້ມຄອງໄວ້. ນາຍບ້ານ ສາມາດນຳໃຊ້ຊັບສົມບັດຂອງ **ກ** ມາຈ່າຍເຂົ້າໃນການມ້ຽນຄາບສົ່ງສະການ ເຮັດບຸນກິນທານຕາມຮີດຄອງ ແລະ ຊຳລະໜີ້ສິນຂອງ **ກ.** ນັບແຕ່ວັນເສຍຊີວິດເປັນຕົ້ນມາ ເປັນເວລາ 3 ປີ 2 ເດືອນແລ້ວ ບໍ່ມີຜູ້ໃດມາສະເໜີ ຫຼື ທວງເອົາ ມູນມໍຣະດົກ, ຊັບຂອງ **ກ** ຈະຕົກເປັນຂອງລັດ.
ເຫດຜົນໃນການປັບປຸງ	ມາດຕານີ້ ປັບປຸງມາຈາກມາດຕາ 18 ຂອງກົດໝາຍວ່າດ້ວຍການສືບທອດມູນມໍຣະດົກປີ 2008 ໂດຍປ່ຽນຄຳສັບ ພະນັກງານທະບຽນສານ ມາເປັນນາຍທະບຽນສານ ເພື່ອໃຫ້ສອດຄ່ອງກັບກົດໝາຍວ່າດ້ວຍທະບຽນສານ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 959 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ; ມາດຕາ 32 ຂອງກົດໝາຍຈີນ:ຂອບເຂດຂອງຜູ້ສືບທອດມູນມໍຣະດົກແມ່ນຍັງບໍ່ກວ້າງ, ດັ່ງນັ້ນມູນມໍຣະດົກອາດຕົກເປັນຂອງລັດໄດ້ງ່າຍກວ່າ.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄ້ວາ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 586 ສິດສືບທອດມູນມໍຣະດົກຂອງຜົວເມຍທີ່ແຍກກັນຢູ່

ຜົວເມຍທີ່ໄດ້ແຍກກັນຢູ່ຕ່າງຫາກ ແຕ່ຍັງບໍ່ທັນໄດ້ຢ່າຮ້າງກັນ ໂດຍຖືກຕ້ອງຕາມກົດໝາຍນັ້ນ ກໍຍັງມີສິດສືບທອດມູນມໍຣະດົກຂອງກັນ ແລະ ກັນໄດ້ຢູ່ ເມື່ອຜູ້ໃດໜຶ່ງຫາກໄດ້ເສຍຊີວິດ.

ຈຸດປະສົງ	ເພື່ອໃຫ້ເຫັນສິດຂອງຜົວ-ເມຍທີ່ ໄດ້ແຍກກັນຢູ່ຕ່າງຫາກແລ້ວ ໃຫ້ມີຄວາມຊັດເຈນຂຶ້ນ; - ເຫດຜົນຂອງການແຍກກັນຢູ່ນັ້ນອາດແມ່ນເລື່ອງສ່ວນຕົວແຕ່ດ້ານກົດໝາຍຍັງບໍ່ທັນໄດ້ຢ່າຮ້າງກັນເທື່ອ; - ຕາມກົດໝາຍແລ້ວຜົວເມຍ ກໍຍັງມີສິດສືບທອດມູນມໍຣະດົກຂອງກັນ - ຖ້າຜູ້ໃດໜຶ່ງຫາກໄດ້ເສຍຊີວິດ.
ຕົວຢ່າງ	**ກ** ແລະ **ຂ** ຄູ່ຜົວເມຍ ແຕ່ງດອງ ແຕ່ປີ 1980, ມີລູກ 3 ຄົນ ມີສິນສົມສ້າງຄື: ທີ່ດິນພ້ອມເຮືອນສອງຫຼັງ. ມາຮອດ2019 **ກ** ແລະ **ຂ** ແຍກກັນຢູ່ ແຕ່ຍັງບໍ່ທັນໄດ້ຢ່າຮ້າງກັນ ຕາມກົດໝາຍ, ຫຼັງຈາກທີ່ແຍກກັນຢູ່ **ກ** ປຸກສ້າງເຮືອນ1 ຫຼັງ ແລະ ມີເງິນຝາກທະນາຄານຈຳນວນ 100.000.000 ກີບ ແລະ **ຂ** ມີຫ້ອງແຖວ12 ຫ້ອງ ຄົນອື່ນເຊົ່າ; - ວັນທີ16 ສິງຫາ 2021 **ກ** ເສຍຊີວິດ; - ມູນມໍຣະດົກທີ່ເປັນຂອງ **ກ** ແລະ **ຂ** ຍັງມີສິດສືບທອດມູນມໍຣະດົກຕາມກົດໝາຍ.
ເຫດຜົນໃນການເດີມ	ມາດຕານີ້ຮັກສາເນື້ອໃນເດີມມາດຕາ 20 ຂອງກົດໝາຍວ່າດ້ວຍການສືບທອດມູນມໍຣະດົກ ປີ 2008ໄວ້ຄືເກົ່າ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ587 ການແບ່ງປັນຄ່າປ່ວດແປງຈິດໃຈ ແລະ ເງິນອຸດໜູນການເສຍຊີວິດ

ຄ່າປ່ວດແປງຈິດໃຈ ແລະ ເງິນອຸດໜູນການເສຍຊີວິດ ໃຫ້ນຳມາແບ່ງເປັນສາມພູດສະເໝີກັນ ແລ້ວມອບໃຫ້ຜູ້ເປັນ ພໍ່ແມ່, ຜົວ ຫຼື ເມຍ ແລະ ລູກ ຂອງຜູ້ເສຍຊີວິດຜູ້ລະພູດ. ໃນກໍລະນີຜູ້ເສຍຊີວິດ ຫາກບໍ່ມີລູກ ໃຫ້ແບ່ງເປັນສອງພູດສະເໝີກັນ ແລ້ວມອບໃຫ້ຜູ້ເປັນພໍ່ແມ່ ແລະ ຜົວ ຫຼື ເມຍຂອງຜູ້ເສຍຊີວິດ ຜູ້ລະພູດ. ໃນກໍລະນີທີ່ຜູ້ເສຍຊີວິດ ຫາກບໍ່ມີພໍ່ແມ່ ກໍໃຫ້ແບ່ງເປັນສອງພູດສະເໝີກັນ ແລ້ວມອບໃຫ້ ຜົວ ຫຼື ເມຍ ແລະ ລູກຂອງຜູ້ເສຍຊີວິດ ຜູ້ລະພູດ. ໃນກໍລະນີ ທີ່ຜູ້ເສຍຊີວິດ ຫາກບໍ່ມີພໍ່ແມ່ ແລະ ລູກ ກໍໃຫ້ມອບແກ່ຜູ້ເປັນຜົວ ຫຼື ເມຍ ທີ່ຍັງມີຊີວິດພຽງຜູ້ດຽວ. ໃນກໍລະນີອື່ນ ການແບ່ງປັນຄ່າປ່ວດແປງຈິດໃຈ ແລະ ເງິນອຸດໜູນການເສຍຊີວິດ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນພາກທີ III ຂອງປະມວນກົດໝາຍສະບັບນີ້. ກ່ອນຈະນຳເອົາຄ່າປ່ວດແປງຈິດໃຈ ແລະ ເງິນອຸດໜູນການເສຍຊີວິດ ມາແບ່ງປັນໃຫ້ກັນນັ້ນ ຕ້ອງຫັກຄ່າມ້ຽນຄາບສົ່ງສະການ, ເຮັດບຸນກິນທານ, ໃຊ້ໜີ້ສິນ ແລະ ພັນທະອື່ນ ຂອງຜູ້ເສຍຊີວິດເສຍກ່ອນ.

ຈຸດປະສົງ	ເພື່ອການກຳນົດໃຫ້ເຫັນວິທີການແບ່ງປັນ ແລະ ຜູ້ທີ່ຈະໄດ້ຮັບຄ່າປ່ວດແປງຈິດໃຈ ແລະ ເງິນອຸດໜູນການເສຍຊີວິດ ວ່າແມ່ນໃຜຈະໄດ້ຮັບ ແລະ ຈະໄດ້ຮັບປະມານເທົ່າໃດ.
ຕົວຢ່າງ	**1. ການແບ່ງປັນລະຫວ່າງ ພໍ່ແມ່, ເມຍ ແລະ ລູກຜູ້ເສຍຊີວິດ.** **ກ** ເປັນລູກຂອງ **ຂ**, **ກ** ເປັນພະນັກງານກົນຈັກຂອງບໍລິສັດໜຶ່ງ, **ກ** ແຕ່ງດອງກັບ **ຄ** ມີລູກ1 ຄົນ **ງ**. ໃນຂະນະທີ່ **ກ** ປະຕິບັດໜ້າທີ່ຢູ່ນັ້ນໄດ້ເກີດອຸບປະຕິເຫດເຄື່ອງຈັກໄດ້ໜີບເອົາແຂນຂອງ **ກ** ເຂົ້າໄປໃນເຄື່ອງຈັກ ແລະ ເສຍຊີວິດ. **ຄ** ຈຶ່ງໄດ້ທວງເງິນຄ່າປ່ວດແປງຈິດໃຈ ແລະ ເງິນອຸດໜູນເສຍຊີວິດ

	ຈາກບ່ອນເຮັດວຽກຂອງ **ກ**, ບໍລິສັດໄດ້ຈ່າຍເງິນຄ່າປ້ອແປງຈິດໃຈ ແລະ ເງິນອຸດໜູນເສຍຊີວິດໃຫ້ແກ່ **ຄ** ລວມທັງໝົດຈຳນວນ 120.000.000 ກີບ, ເງິນດັ່ງກ່າວ **ຄ** ຕ້ອງແບ່ງເປັນ ສາມພູດສະເໝີກັນຄື ແບ່ງປັນໃຫ້ **ຂ** (ຜູ້ເປັນພໍ່), **ຄ** (ເມຍ) ແລະ **ງ** (ລູກ) ເປັນພູດສະເໝີກັນ. **2. ການແບ່ງປັນລະຫວ່າງພໍ່ແມ່ ແລະ ລູກຜູ້ເສຍຊີວິດ** **ກ** ເປັນລູກຂອງ **ຂ**, **ກ** ເປັນພະນັກງານກົນຈັກຂອງບໍລິສັດໜຶ່ງ, **ກ** ແຕ່ງດອງ ກັບ **ຄ** ທັງສອງບໍ່ມີລູກ, ໃນຂະນະທີ່ **ກ** ປະຕິບັດໜ້າທີ່ຢູ່ນັ້ນເກີດອຸບປະຕິເຫດເຄື່ອງຈັກໄດ້ໜີບເອົາແຂນຂອງ **ກ** ເຂົ້າໄປໃນເຄື່ອງຈັກ ແລະ ເສຍຊີວິດ. **ຄ** ຈຶ່ງໄດ້ທວງເງິນຄ່າປ້ອແປງຈິດໃຈ ແລະ ເງິນອຸດໜູນເສຍຊີວິດ ຈາກບ່ອນເຮັດວຽກຂອງ **ກ**, ບໍລິສັດໄດ້ຈ່າຍເງິນຄ່າປ້ອແປງຈິດໃຈ ແລະ ເງິນອຸດໜູນເສຍຊີວິດ ໃຫ້ແກ່ **ຄ** ລວມທັງໝົດຈຳນວນ 120.000.000 ກີບ, ເງິນດັ່ງກ່າວ **ຄ** ຕ້ອງແບ່ງເປັນ ສອງພູດສະເໝີກັນຄື ແບ່ງປັນໃຫ້ **ຂ** (ຜູ້ເປັນພໍ່) ແລະ **ຄ** (ຜູ້ເປັນເມຍ). **3. ການແບ່ງປັນລະຫວ່າງ ເມຍ ແລະ ລູກຜູ້ເສຍຊີວິດ** ພໍ່ແມ່ຂອງ **ກ** ເສຍຊີວິດໄດ້ຫຼາຍປີ, **ກ** ເປັນພະນັກງານກົນຈັກຂອງບໍລິສັດໜຶ່ງ, **ກ** ແຕ່ງດອງ ກັບ **ຄ** ມີລູກ1 ຄົນ **ງ**. ໃນຂະນະທີ່ **ກ** ປະຕິບັດໜ້າທີ່ຢູ່ນັ້ນໄດ້ເກີດອຸບປະຕິເຫດເຄື່ອງຈັກໄດ້ໜີບເອົາແຂນຂອງ **ກ** ເຂົ້າໄປໃນເຄື່ອງຈັກ ແລະ ເສຍຊີວິດ. **ຄ** ຈຶ່ງໄດ້ທວງເງິນຄ່າປ້ອແປງຈິດໃຈ ແລະ ເງິນອຸດໜູນເສຍຊີວິດ ຈາກບ່ອນເຮັດວຽກຂອງ **ກ**, ບໍລິສັດໄດ້ຈ່າຍເງິນຄ່າປ້ອແປງຈິດໃຈ ແລະ ເງິນອຸດໜູນເສຍຊີວິດໃຫ້ແກ່ **ຄ** ລວມທັງໝົດຈຳນວນ 120.000.000 ກີບ, ເງິນດັ່ງກ່າວ **ຄ** ຕ້ອງແບ່ງເປັນ ສອງພູດສະເໝີກັນຄື ແບ່ງປັນໃຫ້ **ຄ** (ຜູ້ເປັນເມຍ) ແລະ **ງ** (ຜູ້ເປັນລູກ) ເປັນພູດສະເໝີກັນ. **4. ຜູ້ເສຍຊີວິດບໍ່ມີພໍ່ແມ່ ແລະ ລູກ.** ພໍ່ແມ່ຂອງ **ກ** ເສຍຊີວິດໄດ້ຫຼາຍປີ, **ກ** ເປັນພະນັກງານກົນຈັກຂອງບໍລິສັດໜຶ່ງ, **ກ** ແຕ່ງດອງ ກັບ **ຄ**ທັງສອງບໍ່ມີລູກ. ໃນຂະນະທີ່ **ກ** ປະຕິບັດໜ້າທີ່ຢູ່ນັ້ນໄດ້ເກີດອຸບປະຕິເຫດເຄື່ອງຈັກໄດ້ໜີບເອົາແຂນຂອງ **ກ** ເຂົ້າໄປໃນເຄື່ອງຈັກ ແລະ ເສຍຊີວິດ.ຄ ຈຶ່ງໄດ້ທວງເງິນຄ່າປ້ອແປງຈິດໃຈ ແລະ ເງິນອຸດໜູນເສຍຊີວິດ ຈາກບ່ອນເຮັດວຽກຂອງ **ກ**, ບໍລິສັດໄດ້ຈ່າຍເງິນຄ່າປ້ອແປງຈິດໃຈ ແລະ ເງິນອຸດໜູນເສຍຊີວິດ ໃຫ້ແກ່ **ຄ** ລວມທັງໝົດຈຳນວນ 120.000.000 ກີບ ເງິນດັ່ງກ່າວ **ຄ** ຈະເປັນຜູ້ໄດ້ຮັບທັງໝົດ. ເງິນຄ່າປ້ອແປງຈິດໃຈ ແລະ ເງິນອຸດໜູນເສຍຊີວິດຂອງ **ກ** ກ່ອນຈະນຳມາແບ່ງປັນທຸກກໍລະນີຂ້າງເທິງຕ້ອງໄດ້ຫັກຄ່າມ້ຽນຄາບສິ່ງສະການ, ເຮັດບຸນ ກິນທານ ແລະ ໃຊ້ໜີ້ສິນ (ຖ້າມີ) ລວມທັງພັນທະອື່ນ ຂອງ **ກ** ເສຍກ່ອນ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກມາດຕາ 26/1 ຂອງກົດໝາຍວ່າດ້ວຍ ຄອບຄົວ ປີ 2008 ໂດຍໄດ້ນຳເອົາວັກທີ 1 ຂອງມາດຕາດັ່ງກ່າວ ມາດຕາ 3 ຂໍ້ 7 ພ້ອມທັງປັບປຸງມາດຕາທີ່ກ່ຽວຂ້ອງໃຫ້ສອດຄ່ອງກັບປະມວນກົດໝາຍແພ່ງ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 576 ແລະ 586 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ

ມາດຕາ 588 ຜູ້ສືບທອດມູນມໍຣະດົກແທນທີ່ກັນ

ເມື່ອບຸກຄົນທີ່ເປັນຜູ້ສືບທອດມູນມໍຣະດົກຕາມກົດໝາຍ ຫາກໄດ້ເສຍຊີວິດກ່ອນເຈົ້າມູນມໍຣະດົກແລ້ວ, ຜູ້ສືບທອດຂອງບຸກຄົນນັ້ນ ກໍມີສິດສືບທອດມູນມໍຣະດົກແທນຜູ້ກ່ຽວ. ເມື່ອຜູ້ສືບທອດມູນມໍຣະດົກແທນທີ່ນີ້ ຫາກໄດ້ເສຍຊີວິດ ກໍໃຫ້ຜູ້ສືບທອດຜູ້ຕໍ່ໄປ ໄດ້ຮັບມູນມໍຣະດົກແທນທີ່ກັນ ແລະ ຕໍ່ໆໄປ.

ຈຸດປະສົງ	ເພື່ອໃຫ້ເຫັນເງື່ອນໄຂທີ່ຈະພາໃຫ້ມີການສືບທອດມູນມໍຣະດົກແທນທີ່ກັນລະຫວ່າງຜູ້ສືບທອດມູນມໍຣະດົກຕາມກົດໝາຍ
ຕົວຢ່າງ	**ກ** ແລະ **ຂ** ຄູ່ຜົວເມຍ ມີລູກ 2 ຄົນ: **ຄ** ແລະ **ງ**, **ກ** ມີຊັບເດີມຄື ເງິນຈຳນວນ 40.000.000 ກີບ ແລະ ສິນສົມສ້າງມູນຄ່າຈຳນວນ 30.000.000 ກີບ, **ຄ** ແຕ່ງດອງ ມີລູກຄື **ຈ** ແລະ **ສ**. ໃນປີ 2020 **ຄ** ເສຍຊີວິດ,ໃນປີ 2021 **ກ** ເສຍຊີວິດ, ຕໍ່ມາ **ຂ**, **ຄ** ແລະ **ງ** ໄດ້ເປີດການສືບທຶດມູນມໍຣະດົກ ຂອງ **ກ**. ຜູ້ສືບທອດມູນມໍຣະດົກຂອງ **ກ** ແມ່ນມີ **ຂ**, **ຄ** ແລະ **ງ** ແຕ່ **ຄ** ໄດ້ເສຍຊີວິດກ່ອນ **ກ**, **ຈ** ແລະ **ສ** ຈະເປັນຜູ້ສືບທອດມູນມໍຣະດົກແທນທີ່ **ຄ**,.
ເຫດຜົນໃນການຮັກສາເນື້ອໃນເດີມ	ມາດຕານີ້ມາຈາກ ມາດຕາ 21 ຂອງກົດໝາຍວ່າດ້ວຍການສືບທອດມູນມໍຣະດົກ ປີ 2008 ປັບປຸງປະໂຫຍກທີ່ວ່າ ກໍມີສິດສືບທອດມູນມໍຣະດົກແທນຜູ້ກ່ຽວຕາມລຳດັບ ໂດຍຕັດຄຳວ່າ ຕາມລຳດັບ ທີ່ຢູ່ໃນທ້າຍປະໂຫຍກນັ້ນອອກ
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 887, 891 ແລະ 892 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ; ມາດຕາ 652 ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2015.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 589 ເງື່ອນໄຂຂອງການສືບທອດມູນມໍຣະດົກແທນທີ່ກັນ

ຜູ້ສືບທອດມູນມໍຣະດົກແທນທີ່ກັນ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ເປັນຜູ້ສືບທອດມູນມໍຣະດົກຕາມກົດໝາຍ;
2. ເປັນລູກຂອງບຸກຄົນທີ່ມີສິດສືບທອດມູນມໍຣະດົກ ຊຶ່ງໄດ້ເສຍຊີວິດກ່ອນແລ້ວ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນເງື່ອນໄຂໃນການເປັນຜູ້ສືບທອດແທນທີ່.
ຕົວຢ່າງ	**1. ກ** ແລະ **ຂ** ຜົວເມຍ ມີລູກນຳກັນ 2 ຄົນ **ຄ** ແລະ **ງ**. **ກ** ມີ ຊັບເດີມເງິນຈຳນວນ 4.000.000 ກີບ ແລະ ສິນສົມສ້າງ ກັບ **ຂ** ເງິນຈຳນວນ 2.000.000 ກີບ, **ຄ** ມີລູກຄື **ຈ** ແລະ **ສ (ຫຼານ ກ ແລະ ຂ)**. ປີ 2020 **ຄ** ເສຍຊີວິດ, ໃນປີ 2021 **ກ** ເສຍຊີວິດ. ຜູ້ມີສິດສືບທອດມູນມໍຣະດົກຂອງ **ກ** ມີ **ຂ**, **ຄ** ແລະ **ງ**, ແຕ່ **ຄ** ແມ່ນໄດ້ເສຍຊີວິດກ່ອນ **ກ**, **ຈ** ແລະ **ສ** ຈະເປັນຜູ້ສືບທອດແທນທີ່ຂອງ **ຄ**. **2. ກ** ແລະ **ຂ** ມີລູກນຳກັນ2ຄົນ **ຄ** ແລະ **ງ**, **ຄ** ມີ ລູກຄື **ຈ** ແລະ **ສ**. ປີ 2019 **ຄ** ຖືກປົດສິດການເປັນລູກ (ມາດຕາ 617) ຍ້ອນໃຊ້ຄວາມຮຸນແຮງກັບ **ກ**, ໃນປີ 2020 **ຄ** ເສຍຊີວິດ, ໃນປີ 2021 **ກ** ເສຍຊີວິດ ຜູ້ມີສິດສືບທອດມູນມໍຣະດົກຂອງ **ກ** ມີ **ຂ** ແລະ **ງ**, ເນື່ອງຈາກ **ຄ** ຖືກປົດສິດການເປັນລູກຈາກ **ກ** ແລ້ວ **ສ** ແລະ **ຈ** ຈຶ່ງບໍ່ສາມາດເປັນຜູ້ສືບທອດແທນທີ່ຂອງ **ຄ** ໃນການສືບທອດມູນມໍຣະດົກຂອງ **ກ** ໄດ້ອີກ.
ເຫດຜົນໃນການຮັກສາເນື້ອໃນເດີມ	ມາດຕານີ້ຮັກສາເນື້ອໃນເດີມມາດຕາ 22 ຂອງກົດໝາຍວ່າດ້ວຍການສືບທອດມູນມໍຣະດົກ ປີ 2008 ໄວ້ຄືເກົ່າ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 887, 891 ແລະ 892 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 572, 574, 575 ແລະ 588 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ໝວດທີ3
ການສືບທອດມູນມໍຣະດົກຕາມພິໄນກຳ

ມາດຕາ 590 ພິໄນກຳ

ພິໄນກຳ ແມ່ນການສະແດງເຈດຈຳນົງຂອງເຈົ້າຂອງຊັບ ໃນການເອົາຊັບຂອງຕົນໃຫ້ບຸກຄົນ ຫຼື ນິຕິບຸກຄົນ ຫຼື ການຈັດຕັ້ງ ດ້ວຍການເຮັດເປັນລາຍລັກອັກສອນ ຫຼື ທາງປາກເປົ່າ.

ພິໄນກຳ ມີຜົນບັງຄັບທາງດ້ານກົດໝາຍ ນັບແຕ່ເຈົ້າຂອງຊັບ ເສຍຊີວິດເປັນຕົ້ນໄປ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ນິຍາມຂອງພິໄນກຳພ້ອມທັງໄລຍະເວລາທີ່ຈະເກີດຜົນບັງຄັບໃຊ້ທາງກົດໝາຍ.
ຕົວຢ່າງ	**ກ** ມີລູກ 3 ຄົນຄື: **ຂ**, **ຄ** ແລະ **ງ**; **ກ** ມີຊັບສົມບັດຄື: ທີ່ດິນນາ 2 ເຮັກຕາ, ທີ່ດິນປຸກສ້າງພ້ອມດ້ວຍເຮືອນ 1 ຫຼັງ, ລົດ ແລະ ເງິນຝາກທະນາຄານຈຳນວນ 100.000 ບາດ, **ກ** ສະແດງເຈດຈຳນົງມອບຊັບທີ່ເປັນຂອງຜູ້ກ່ຽວນັ້ນໂດຍມອບລົດໃຫ້ **ຂ** ແລະ ມອບເງິນຈຳນວນ 50.000 ບາດ ແກ່ **ງ** ເພື່ອໃຫ້ລູກແຕ່ລະຄົນມີສິດຄຸ້ມຄອງນຳໃຊ້ຂອງ**ກ** ໃນເວລາທີ່ໄດ້ເສຍຊີວິດໄປແລ້ວດ້ວຍການເຮັດພິໄນກຳໄວ້, ການເຮັດພິໄນກຳນັ້ນ **ກ** ສາມາດເຮັດໄດ້ ເປັນລາຍລັກອັກສອນ ຕາມມາດຕາ 592, 594 ແລະ ປາກເປົ່າ ຕາມມາດຕາ 596 ຂອງປະມວນກົດໝາຍແພ່ງ, ພິໄນກຳຂອງ **ກ** ນັ້ນ ຈະມີຜົນບັງຄັບໃຊ້ທາງດ້ານກົດໝາຍເມື່ອ **ກ** ເສຍຊີວິດແລ້ວ ຈຶ່ງພາໃຫ້ມີການເປີດພິໄນກຳຕາມທີ່ໄດ້ກຳນົດໄວ້ໃນມາດຕາ 605 ຂອງປະມວນກົດໝາຍແພ່ງ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກມາດຕາ 3 ຂອງກົດໝາຍວ່າດ້ວຍການສືບທອດມູນມໍຣະດົກ ປີ 2008ການອະທິບາຍຄຳສັບ ຂໍ້ 6 ແລະ ຂໍ້ 8 ແມ່ນເປັນການອະທິບາຍຄຳສັບລວມທີ່ຢູ່ໃນກົດໝາຍ ປະມວນກົດໝາຍແພ່ງ ໂດຍແຍກອອກມາເປັນມາດຕາໜຶ່ງ ແລະ ປັບປຸງວິທີການຂຽນຄືນໃໝ່ ໂດຍໄດ້ເພີ່ມວັກທີ 2 ເຂົ້າໃສ່ໃໝ່ເພື່ອໃຫ້ຮູ້ວ່າພິໄນກຳນັ້ນ ມີຜົນສັກສິດທາງດ້ານກົດໝາຍນັບແຕ່ເວລາໃດເປັນຕົ້ນໄປ; ສ່ວນພະຍານທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍການສືບທອດມູນມໍຣະດົກ ປີ 2008 ນັ້ນແມ່ນໄດ້ຕັດອອກແລ້ວນຳໄປໄວ້ໃນມາດຕາທີ່ກ່ຽວຂ້ອງຄື ມາດຕາ 594 ແລະ ມາດຕາ 596 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 1646 ແລະ 1647 ຂອງປະມວນກົດໝາຍແພ່ງແລະພານິດໄທ; ມາດຕາ 624 ແລະ 643 ຂອງປະມວນກົດໝາຍແພ່ງຫວຽດນາມ.
ມາດຕາອ້າງອີງ	ມາດຕາ 16, 594, 596 ແລະ 605 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 591 ສິດໃນການເຮັດພິໄນກຳ

ພົນລະເມືອງທຸກຄົນ ມີສິດເຮັດພິໄນກຳມອບຊັບສົມບັດທີ່ເປັນກຳມະສິດຂອງຕົນ ໃຫ້ບຸກຄົນໃດໜຶ່ງ ຫຼືໃຫ້ຫຼາຍຄົນ, ໃຫ້ອົງການຈັດຕັ້ງຂອງລັດ, ລວມໝູ່ ແລະ ອົງການຈັດຕັ້ງສັງຄົມ, ກອງທຶນ, ມູນນິທິຕ່າງໆ ຫຼືສະຫງວນໄວ້ສ່ວນໃດໜຶ່ງ ເພື່ອເປັນບ່ອນສັກການະບູຊາ ຫຼື ຮັກສາ ໃຫ້ຍາດພີ່ນ້ອງທີ່ຂາດເຂີນສາມາດສ້າງຢູ່ທຳກິນຕາມເຈດຈຳນົງຂອງຕົນກ່ອນເສຍຊີວິດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 593 ຂອງປະມວນກົດໝາຍສະບັບນີ້.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ພົນລະເມືອງທຸກຄົນມີສິດມອບຊັບຂອງຕົນເອງໃຫ້ແກ່ບຸກຄົນອື່ນ, ອົງການຈັດຕັ້ງຂອງລັດ, ລວມໝູ່ ແລະ ອົງການຈັດຕັ້ງສັງຄົມ, ກອງທຶນ, ມູນນິທິຕ່າງໆ ຕາມເຈດຈຳນົງຂອງຕົນເອງ ດ້ວຍວິທີເຮັດພິໄນກຳ.

ຕົວຢ່າງ	**1. ກ** ມີທີ່ດິນໜຶ່ງຕອນ ແລະ ເງິນຝາກທະນາຄານຈຳນວນ 50.000.000 ກີບ. ຜູ້ກ່ຽວບໍ່ມີລູກ ແລະ ຍາດພີ່ນ້ອງ. ສະນັ້ນ **ກ** ຕ້ອງການມອບເງິນທັງໝົດໃຫ້ແກ່ **ຄ** ທີ່ເປັນຄົນຮັກແພງ. ນອກນັ້ນຍັງ **ກ** ຢາກມອບທີ່ດິນໜຶ່ງຕອນໃຫ້ແກ່ບ້ານທີ່ອາໄສຢູ່. **ກ** ສາມາດຂຽນໄວ້ໃນພິໄນກຳ, ກໍລະນີທີ່ເສຍຊີວິດ, ມອບເງິນສິດໃຫ້ແກ່ **ຄ**, ມອບທີ່ດິນໃຫ້ແກ່ ບ້ານບ່ອນທີ່ **ກ** ອາໄສຢູ່; **2. ກ** ມີທີ່ດິນໜຶ່ງຕອນ ແລະ ເງິນຝາກທະນາຄານຈຳນວນ 50.000.000 ກີບ. ເນື່ອງຈາກ **ກ** ມີລູກ 1 ຄົນຄື: **ຄ** ທີ່ເປັນພະຍາດ ແລະ ບໍ່ແຂງແຮງ, ບໍ່ສາມາດດຳລົງຊີວິດໄດ້ດ້ວຍຕົນເອງ **ກ** ຈຶ່ງກຳນົດໄວ້ໃນພິໄນກຳວ່າຈຳນວນເງິນຝາກທະນາຄານ ໃຫ້ **ຄ** ຈຳນວນ 40.000.000 ກີບ ເພື່ອໃຫ້ປັນກອງທຶນໃນການດຳເນີນຊີວິດ ພາຍຫຼັງທີ່ **ກ** ເສຍຊີວິດ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 24 ຂອງກົດໝາຍວ່າດ້ວຍການສືບທອດມູນມໍຣະດົກ ປີ 2008 ສິດໃນການມອບຊັບ, ຍົກຊັບ ຫຼື ການເຮັດພິໄນກຳ ແມ່ນໄດ້ກຳນົດໂດຍລວມຄື ສິດການມອບຊັບ, ຍົກຊັບ ຫຼື ການເຮັດພິໄນກຳ ໄວ້ໃນມາດຕາດຽວ ເພື່ອເປັນການເຂົ້າໃຈງ່າຍ ປະມວນກົດໝາຍແພ່ງຈຶ່ງແຍກອອກຈາກກັນໂດຍມາດຕານີ້ ກຳນົດໃຫ້ມີພຽງແຕ່ສິດໃນການເຮັດພິໄນກຳເທົ່ານັ້ນ ສ່ວນການມອບຊັບ ແລະ ການຍົກຊັບແມ່ນຕັດອອກຈາກຫົວຂໍ້ແລະ ເນື້ອໃນຂອງມາດຕານີ້ ແລ້ວເອົາໄປໄວ້ຢູ່ໃນພາກທີ 4 ຊັບ, ກຳມະສິດ ແລະ ສິດອື່ນຕໍ່ຊັບ ເພື່ອໃຫ້ເປັນລະບົບ ແລະ ອ່ານເຂົ້າໃຈງ່າຍ; ຄຳວ່າ: ສະຫງວນໄວ້ສ່ວນໃດໜຶ່ງຕາມມາດຕານີ້ມີຄວາມໝາຍວ່າພິໄນກຳທີ່ມອບອະສັງຫາລິມະຊັບເປັນຕົ້ນແມ່ນທີ່ດິນ ໄວ້ສ່ວນໃດໜຶ່ງໃຫ້ຜູ້ສືບທອດຕາມກົດໝາຍ ຫຼື ໄວ້ເພື່ອລ້ຽງດູຍາດພີ່ນ້ອງທີ່ຂາດເຂີນໄດ້ອາໄສ ຫຼື ທຳມາຫາກິນ ແລະ ອີກຢ່າງໜຶ່ງກໍມີຄວາມໝາຍວ່າ ພົນລະເມືອງທຸກຄົນມີສິດເຮັດພິໄນກຳເພື່ອຈັດການຊັບຂອງຕົນ ໂດຍຈະມອບໃຫ້ບຸກຄົນໃດໜຶ່ງ ທັງໝົດ ຫຼື ສ່ວນໃດໜຶ່ງກໍໄດ້.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 1647 ຂອງປະມວນກົດໝາຍແພ່ງ ແລະ ພານິດໄທ.
ມາດຕາອ້າງອີງ	ມາດຕາ 590, 593, 594 ແລະ 595 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 592 ຂອບເຂດສິດໃນການເຮັດພິໄນກຳ

ເຈົ້າຂອງຊັບ ທີ່ຍັງມີຊີວິດຢູ່ຈະເຮັດພິໄນກຳໃຫ້ປະຕິບັດຕາມຂອບເຂດ ດັ່ງນີ້:

1. ຖ້າເຈົ້າມູນມໍຣະດົກ ຫາກມີລູກ ໜຶ່ງຄົນ ສາມາດເຮັດພິໄນກຳ ໃຫ້ຜູ້ອື່ນ ບໍ່ໃຫ້ເກີນເຄິ່ງໜຶ່ງ ຂອງຊັບທັງໝົດ;
2. ຖ້າເຈົ້າມູນມໍຣະດົກ ຫາກມີລູກ ສອງຄົນ ສາມາດເຮັດພິໄນກຳ ໃຫ້ລູກຜູ້ໃດໜຶ່ງ ຫຼື ຜູ້ອື່ນ ບໍ່ໃຫ້ເກີນໜຶ່ງສ່ວນສາມຂອງຊັບທັງໝົດ;
3. ຖ້າເຈົ້າມູນມໍຣະດົກ ຫາກມີລູກ ສາມຄົນຂຶ້ນໄປ ສາມາດເຮັດພິໄນກຳ ໃຫ້ລູກຜູ້ໃດໜຶ່ງ ຫຼື ຜູ້ອື່ນ ບໍ່ໃຫ້ເກີນໜຶ່ງສ່ວນສີ່ຂອງຊັບທັງໝົດ.

ເມື່ອການເຮັດພິໄນກຳຫາກເກີນກວ່າຈຳນວນທີ່ໄດ້ກຳນົດໄວ້ໃນວັກທີໜຶ່ງ ຂອງມາດຕານີ້ ສ່ວນທີ່ເກີນນັ້ນຖືເປັນໂມຄະແລ້ວໃຫ້ນຳມາແບ່ງປັນການສືບທອດຕາມກົດໝາຍ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ກ່ຽວກັບຂອບເຂດຂອງຊັບທີ່ພິໄນກຳບໍ່ສາມາດຈັດການໄດ້ແລະ ຜົນສະທ້ອນໃນກໍລະນີເຮັດພິໄນກຳເກີນຂອບເຂດດັ່ງກ່າວ.

ຕົວຢ່າງ	**1: ກ** ມີລູກສອງຄົນຄື **ຂ** ແລະ **ຄ. ກ** ມີທີ່ດິນ ແລະ ເງິນຝາກທະນາຄານ ຈຳນວນ 100.000.000 ກີບ, ເວລາເປີດພິເນນກຳ ຫຼັງຈາກ **ກ** ເສຍຊີວິດ, ພິເນນກຳລະບຸວ່າ **ກ** ເອົາຊັບສິນທັງໝົດໃຫ້ **ງ** ເປັນຄົນຮູ້ຈັກ, ໃນພິເນນກຳຈະມີຜົນສັກສິດໃຊ້ໄດ້ບໍ່ເກີນ 1/3 ຂອງຊັບສິນທັງໝົດຂອງ **ກ**, ອີກ 2/3 ແມ່ນແບ່ງໃຫ້ລູກທັງສອງຄົນຂອງ **ກ** ເທົ່າກັນ. **2: ກ** ມີລູກ 3 ຄົນ ຄື: **ຂ,ຄ** ແລະ **ງ**, **ກ** ມີທີ່ດິນ ແລະ ເງິນຝາກທະນາຄານ ຈຳນວນ 100.000.000 ກີບ, ເວລາເປີດພິເນນກຳ ຫຼັງຈາກ **ກ** ເສຍຊີວິດ, ພິເນນກຳລະບຸວ່າ **ກ** ເອົາຊັບສິນທັງໝົດໃຫ້ **ຂ**. ໃນພິເນນກຳນີ້, ຈະມີຜົນສັກສິດໃຊ້ໄດ້ບໍ່ເກີນ 1/4 ຂອງຊັບສິນທັງໝົດຂອງ **ກ** ດັ່ງນັ້ນ, **ຂ** ມີ ສິດຮັບເອົາມູນມໍຣະດົກຕາມພິເນນກຳ 1/4 ແລະ 3/4 ທີ່ເຫຼືອ ຊຶ່ງບໍ່ຖືກຕ້ອງ ແມ່ນເປັນໂມຄະ ໃຫ້ນຳມາແບ່ງປັນກັນຕາມກົດໝາຍ ແກ່ **ຂ**, **ຄ** ແລະ **ງ** ເປັນພູດສະເໝີກັນ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 25 ຂອງກົດໝາຍວ່າດ້ວຍການສືບທອດມູນມໍຣະດົກປີ 2008 ຂອບເຂດສິດໃນການເຮັດພິເນນກຳໄດ້ກຳນົດຂອບເຂດສິດເປັນອັນລວມຄື: ຂອບເຂດສິດໃນການມອບຊັບ, ຍົກຊັບ ຫຼື ການເຮັດພິເນນກຳ ໄວ້ໃນມາດຕາດຽວ ເພື່ອເປັນການເຂົ້າໃຈງ່າຍ ປະມວນກົດໝາຍແພ່ງ ຈຶ່ງແຍກອອກຈາກກັນ, ໂດຍມາດຕານີ້ ກຳນົດໃຫ້ມີພຽງແຕ່ສິດໃນການເຮັດພິເນນກຳເທົ່ານັ້ນ ທັງນີ້ໄດ້ເອົາຂອບເຂດສິດໃນການມອບຊັບ ແລະ ຍົກຊັບໄປໄວ້ຢູ່ໃນພາກທີ 4 ຊັບ,ກຳມະສິດ ແລະ ສິດອື່ນຕໍ່ຊັບເພື່ອໃຫ້ເປັນລະບົບ ແລະ ເອກະພາບ ເຂົ້າໃຈງ່າຍ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 995 ແລະ 1042 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 22 ແລະ 573 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ

ມາດຕາ 593 ຮູບການການເຮັດພິເນນກຳ

ພິເນນກຳສາມາດເຮັດຂຶ້ນໃນສອງຮູບການດັ່ງນີ້:

1. ພິເນນກຳເປັນລາຍລັກອັກສອນ;
2. ພິເນນກຳທາງປາກເປົ່າ.

ຈຸດປະສົງ	ເພື່ອໃຫ້ຮູ້ຮູບການຂອງການເຮັດພິເນນກຳ
ຕົວຢ່າງ	ສຳລັບຂໍ້ 1 ຂອງມາດຕານີ້ກະລຸນາເບິ່ງຕົວຢ່າງໃນມາດຕາ 594 ຫາ595, ແລະ ຂໍ້ 2 ຂອງມາດຕານີ້ສາມາດເບິ່ງຕົວຢ່າງໃນມາດຕາ 596 ຂອງປະມວນກົດໝາຍແພ່ງ.
ເຫດຜົນໃນການຮັກສາເນື້ອໃນເດີມ	ມາດຕານີ້ຮັກສາເນື້ອໃນເດີມ ມາດຕາ 26 ຂອງກົດໝາຍວ່າດ້ວຍການສືບທອດມູນມໍຣະດົກ ສະບັບປີ 2008 ໄວ້ຄືເກົ່າ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 967-970, 976, 977, 979 ແລະ 978 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 394 ແລະ 396 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 594 ພິເນນກຳເປັນລາຍລັກອັກສອນ

ການເຮັດພິເນນກຳເປັນລາຍລັກອັກສອນອາດເຮັດດ້ວຍ:

1. ການຂຽນພິເນນກຳໂດຍເຈົ້າມູນມໍຣະດົກເອງ;

2. ການຂຽນພິໄນກຳໂດຍຜູ້ອື່ນຂຽນໃຫ້ຕ້ອງມີພະຍານຢ່າງໜ້ອຍສາມຄົນເຂົ້າຮ່ວມນຳແຕ່ຕ້ອງຮັກສາຄວາມລັບໄວ້ຈົນກວ່າຈະມີການເປີດພິໄນກຳ ຫຼື ການເປີດການສືບທອດມູນມໍຣະດົກ.

ໃນພິໄນກຳນັ້ນຕ້ອງບອກສະຖານທີ່, ວັນ, ເດືອນ, ປີເຮັດພິໄນກຳ, ປະເພດ ແລະ ຈຳນວນຊັບທີ່ຈະມອບ, ຊື່ ແລະ ນາມສະກຸນຂອງຜູ້ມອບ ແລະ ຜູ້ຮັບ, ຜູ້ຂຽນ ແລະ ຂອງພະຍານ.

ຜູ້ມອບ, ຜູ້ຂຽນ ແລະ ພະຍານຕ້ອງລົງລາຍເຊັນ ແລະ ແປະໂປ້ມືໃສ່ພິໄນກຳ.

ພິໄນກຳນັ້ນຫຼັງຈາກເຮັດແລ້ວຕ້ອງໃສ່ຊອງຕິດໃຫ້ແໜ້ນ ຫຼື ຕິດດ້ວຍຄັ່ງແລ້ວໄປຂຶ້ນທະບຽນນຳນາຍທະບຽນສານ ບ່ອນເຈົ້າມູນມໍຣະດົກຢູ່ ຫຼື ບ່ອນທີ່ໃກ້ຄຽງ ຫຼື ນຳໄປໄວ້ຢູ່ອົງການປົກຄອງບ້ານສຳລັບບ່ອນທີ່ບໍ່ມີຫ້ອງການທະບຽນສານ.

ຈຸດປະສົງ	ເພື່ອໃຫ້ຮູ້ລະບຽບການ ແລະ ວິທີການເຮັດພິໄນກຳເປັນລາຍລັກອັກສອນ.
ຕົວຢ່າງ	**ກ** ມີຊັບສົມບັດຄື: ເງິນຝາກທະນາຄານຈຳນວນ 500.000.000 ກີບ, ທີ່ດິນປຸກສ້າງພ້ອມເຮືອນໜຶ່ງຫຼັງແລະລົດ 1 ຄັນ, **ກ** ມີຄວາມຕ້ອງການຢາກເຮັດພິໄນກຳສາມາດເຮັດໄດ້ໂດຍມີວິທີການ ແລະ ຂັ້ນຕອນຄື: **ກໍລະນີ 1: ການຂຽນພິໄນກຳໂດຍເຈົ້າມູນມໍຣະດົກເອງ** **ກ** ເຈົ້າຂອງຊັບເປັນຜູ້ຂຽນເອງໃນພິໄນກຳນັ້ນຕ້ອງບອກສະຖານທີ່ ບ່ອນທີ່ຕົນເອງຂຽນ, ວັນທີເຮັດພິໄນກຳ, ອາດຈະມີພະຍານ ຫຼື ບໍ່ມີກໍໄດ້, ຊື່ ແລະ ນາມສະກຸນຜູ້ຂຽນ, ຊື່ ແລະ ນາມສະກຸນຜູ້ມອບ, ປະເພດ ແລະ ຈຳນວນຂອງຊັບທີ່ຈະມອບ, ຊື່ ແລະນາມສະກຸນ ຂອງຜູ້ຈະໄດ້ຮັບ ເມື່ອຂຽນສຳເລັດແລ້ວຜູ້ທີ່ເຂົ້າຮ່ວມກໍຄື: ພະຍານ (ຖ້າມີ) ແລະ **ກ** ຕ້ອງລົງລາຍເຊັນໄວ້ ແລະ ແປະໂປ້ມືໄວ້ (ກໍລະນີນີ້ແມ່ນ **ກ** ຈະລົງລາຍເຊັນບ່ອນຜູ້ຂຽນເລີຍກໍໄດ້ເພາະ **ກ** ເປັນທັງຜູ້ຂຽນ ແລະ ຜູ້ມອບ) ແລ້ວນຳໃສ່ຊອງຕິດໃຫ້ແໜ້ນນຳໄປຂຶ້ນທະບຽນສານ ບ່ອນທີ່ຫ້ອງການທະບຽນສານບ່ອນທີ່ **ກ** ອາໄສຢູ່ ຫຼື ບໍລິເວນໃກ້ຄຽງ ຖ້າບ່ອນທີ່ກໍຢູ່ຫາກບໍ່ມີຫ້ອງການທະບຽນສານແມ່ນນຳໄປໄວ້ຢູ່ອົງການປົກຄອງບ້ານທີ່ **ກ** ຢູ່ນັ້ນຮັກສາໄວ້; **ກໍລະນີ 2: ການຂຽນພິໄນກຳໂດຍຜູ້ອື່ນຂຽນໃຫ້** **ກ** ເຈົ້າຂອງຊັບ ເສຍຄວາມສາມາດໃນການເບິ່ງເຫັນ ບໍ່ສາມາດຂຽນພິໄນກຳດ້ວຍຕົນເອງໄດ້, ຈຶ່ງໃຫ້ **ຂ** ຄົນຮູ້ຈັກເປັນຜູ້ເຮັດໃຫ້, ໃນເວລາທີ່ຂຽນຕ້ອງໃຫ້ມີຢ່າງໜ້ອຍ 3 ຄົນເປັນພະຍານຊ້ອງໜ້າກັນ, ຂຽນຊື່ ຈົ້ຳໂປ້ ຕິດໃຫ້ແໜ້ນແລ້ວນຳໄປຂຶ້ນທະບຽນສານ ຢູ່ຫ້ອງການທະບຽນສານບ່ອນທີ່ **ກ** ອາໄສຢູ່ ຫຼື ບໍລິເວນໃກ້ຄຽງ ຖ້າບ່ອນທີ່ກໍຢູ່ຫາກບໍ່ມີຫ້ອງການທະບຽນສານແມ່ນນຳໄປໄວ້ຢູ່ອົງການປົກຄອງບ້ານທີ່ **ກ** ຢູ່ນັ້ນຮັກສາໄວ້.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງຈາກມາດຕາ 27 ຂອງກົດໝາຍວ່າດ້ວຍການສືບທອດມູນມໍຣະດົກປີ 2008 ພິໄນກຳເປັນລາຍລັກອັກສອນແມ່ນໄດ້ກຳນົດພິໄນກຳທີ່ຂຽນໂດຍເຈົ້າມູນເອງ ແລະ ໃຫ້ຜູ້ອື່ນຂຽນໃຫ້ໃນວັກດຽວ ແຕ່ໃນປະມວນກົດໝາຍແພ່ງໄດ້ມາແຍກອອກ ເປັນຂໍ້ເພື່ອໃຫ້ມີຄວາມເຂົ້າໃຈງ່າຍ, ພ້ອມທັງໄດ້ເພີ່ມປະໂຫຍກທີ່ວ່າ ການເປີດພິໄນກຳ ເພາະມື້ທີ່ເປີດພິໄນກຳອາດຈະບໍ່ແມ່ນມື້ດຽວກັນກັບທີ່ເປີດການສືບທອດມູນມໍຣະດົກແລະປ່ຽນແປງຄຳວ່າ"ສຳນັກງານທະບຽນສານ" ມາເປັນ "ຫ້ອງການທະບຽນສານ"ຄຳວ່າ "ພະນັກງານທະບຽນສານ" ມາເປັນ "ນາຍທະບຽນສານ"ເພື່ອໃຫ້ສອດຄ່ອງກັບກົດໝາຍວ່າດ້ວຍທະບຽນສານທີ່
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 1657 ຂອງປະມວນກົດໝາຍແພ່ງ ແລະ ພານິດໄທ; ມາດຕາ 967 ແລະ 975 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.

ມາດຕາອ້າງອີງ	ມາດຕາ 20 ກົດໝາຍວ່າດ້ວຍທະບຽນສານ ປີ 2009.
ຂໍ້ມູນອື່ນຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 595 ຜູ້ບໍ່ມີສິດຮັບຊັບຕາມພິໄນກຳເປັນລາຍລັກອັກສອນ

ຜູ້ບໍ່ມີສິດຮັບຊັບຕາມພິໄນກຳ ເປັນລາຍລັກອັກສອນມີດັ່ງນີ້:

1. ຜູ້ຂຽນພິໄນກຳ;
2. ພະຍານໃນການເຮັດພິໄນກຳ;
3. ພີ່ນ້ອງ ຫຼື ເມຍ ຫຼື ລູກຂອງຜູ້ຂຽນພິໄນກຳທີ່ບໍ່ແມ່ນເຈົ້າມູນມໍຣະດົກ ຫຼື ຂອງພະຍານໃນການເຮັດພິໄນກຳ.

ຈຸດປະສົງ	ເພື່ອໃຫ້ຮູ້ບຸກຄົນທີ່ກົດໝາຍບໍ່ອະນຸຍາດໃຫ້ຮັບຊັບຕາມພິໄນກຳທີ່ເປັນລາຍລັກອັກສອນ
ຕົວຢ່າງ	**1. ກ** ບໍ່ຮູ້ໜັງສືຕ້ອງການຂຽນພິໄນກຳມອບລົດ ໜຶ່ງຄັນໃຫ້ **ຂ,** ໂດຍກບອກ **ຂ** ຂຽນພິໄນກຳໃຫ້, ແລ້ວ **ຂ** ແລະ **ກ** ພ້ອມພະຍານ ຄື: **ຄ**, **ງ** ແລະ **ສ** ລົງລາຍເຊັນ ພ້ອມແປະໂປ້ມືໃສ່. **ຂ**, **ຄ**, **ງ** ແລະ **ສ** ບໍ່ສາມາດຮັບຊັບຕາມພິໄນກຳ. ເຊັ່ນດຽວກັນກັບຄູ່ພີ່ນ້ອງເມຍ ແລະ ລູກຂອງ **ຂ**, **ຄ** ແລະ **ງ** ບໍ່ສາມາດຮັບເອົາຊັບຕາມພິໄນກຳຂອງກໄດ້. **2. ກ** ໄດ້ຂຽນພິໄນກຳມອບ ທີ່ດິນນາໃຫ້ **ຄ;** ມອບທີ່ດິນ ແລະ ເຮືອນໜຶ່ງຫຼັງ ໃຫ້ **ງ** ແລະ ມອບເງິນຈຳນວນ 100.000.000 ກີບ ໃຫ້ **ສ** (ຜູ້ເປັນພະຍານໃນພິໄນກຳດັ່ງກ່າວ) **ຄ**, **ງ** ແລະ **ສ** ບໍ່ສາມາດຮັບຊັບຕາມພິໄນກຳເຊັ່ນດຽວກັນກັບຄູ່ພີ່ນ້ອງເມຍ ແລະ ລູກຂອງ **ຄ**, **ງ** ແລະ **ສ** ບໍ່ສາມາດຮັບເອົາຊັບຕາມພິໄນກຳໄດ້ຕາມມາດຕານີ້.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 31 ຂອງກົດໝາຍວ່າດ້ວຍການສືບທອດມູນມໍຣະດົກປີ 2008 ຜູ້ບໍ່ມີສິດຮັບຊັບຕາມພິໄນກຳເປັນລາຍລັກອັກສອນ ໂດຍສະເພາະແມ່ນໄດ້ແຍກເປັນແຕ່ລະຂໍ້ ເພື່ອໃຫ້ເຫັນຈະແຈ້ງ ແລະ ອ່ານເຂົ້າໃຈງ່າຍວ່າໃຜແດ່ທີ່ບໍ່ມີສິດຮັບຊັບໃນພິໄນກຳຕາມມາດຕານີ້.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 1653 ຂອງປະມວນກົດໝາຍແພ່ງ ແລະ ພານິດໄທ; ມາດຕາ966 ແລະ974 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 21 ແລະ 602 ຂໍ້ 4 ຂອງປະມວນກົດໝາຍກົດໝາຍແພ່ງ.
ຂໍ້ມູນອື່ນຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ596 ພິໄນກຳທາງປາກເປົ່າ

ເຈົ້າຂອງຊັບ ທີ່ບໍ່ສາມາດເຮັດພິໄນກຳເປັນລາຍລັກອັກສອນໄດ້ຍ້ອນຕົກຢູ່ໃນສະພາບອັນຕະລາຍທີ່ໃກ້ຈະເສຍຊີວິດ, ຍ້ອນສຸຂະພາບອ່ອນເພຍຫຼືຍ້ອນສາເຫດອື່ນຈະເຮັດພິໄນກຳທາງປາກເປົ່າກໍໄດ້ໂດຍໃຫ້ມີພະຍານຮັບຮູ້ນຳ.

ພະຍານດັ່ງກ່າວຕ້ອງແຈ້ງຂໍ້ຄວາມທັງໝົດ ທີ່ເຈົ້າມູນມໍຣະດົກສັ່ງໄວ້ນັ້ນ ຕໍ່ຫ້ອງການທະບຽນສານ ຫຼື ອົງການປົກຄອງບ້ານໃນທັນທີແລະຊີ້ແຈງສາເຫດທີ່ພາໃຫ້ເຈົ້າຂອງຊັບນັ້ນ ບໍ່ສາມາດເຮັດພິໄນກຳເປັນລາຍລັກອັກສອນໄດ້ ຊຶ່ງຫ້ອງການທະບຽນສານ ຫຼື ອົງການປົກຄອງບ້ານ ຕ້ອງເຮັດບົດບັນທຶກຂໍ້ຄວາມດັ່ງກ່າວໄວ້.

ພິໄນກຳທາງປາກເປົ່ານັ້ນຈະບໍ່ມີຜົນໃຊ້ໄດ້ຖ້າຫາກກາຍກຳນົດເວລາ ໜຶ່ງເດືອນນັບແຕ່ວັນເຈົ້າຂອງຊັບ ໄດ້ກັບຄືນສູ່ສະພາບປົກກະຕິ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ກ່ຽວກັບ ກໍລະນີທີ່ຮັບຮູ້ການເຮັດພິໄນກຳທາງປາກເປົ່າ, ວິທີການ ແລະ ຜົນສະທ້ອນ.

ຕົວຢ່າງ	**1. ກ** ມີລູກ 2 ຄົນ ຄື: **ຂ**, **ຄ** ແລະ **ສ** (ຫຼານ) ອາໄສຢູ່ນຳກັນຊຶ່ງ **ກ** ມີເງິນຢູ່ທະນາຄານ ຈຳນວນ 500.000.000 ກີບ, ທີ່ດິນນາ ແລະ ລົດ 2 ຄັນ, ເດືອນ ສິງຫາ ປີ 2020 **ກ** ເປັນອຳມະພາດແຂນລ່ອຍ ບໍ່ສາມາດຂຽນໜັງສືໄດ້, ມາຮອດເດືອນ ທັນວາ ປີ 2020 **ກ** ເຫັນວ່າສຸຂະພາບຊຸດໂຊມລົງຫຼາຍ ຜູ້ກ່ຽວຕ້ອງການຢາກຈະມອບຊັບໃຫ້ **ຄ** ຫຼາຍກວ່າ **ຂ**, **ກ** ໄດ້ສັ່ງຄວາມໄວ້ກັບ **ສ** ຈຶ່ງເປັນພິໄນກຳທາງປາກເປົ່າ ໂດຍມີພະຍານເຂົ້າຮ່ວມນຳເວລາທີ່ຜູ້ກ່ຽວສັ່ງໄວ້ນັ້ນ, ພາຍຫຼັງທີ່ **ສ** ໄດ້ຍິນຄຳສັ່ງດັ່ງກ່າວແລ້ວ ຕ້ອງໄປແຈ້ງຕໍ່ອົງການປົກຄອງບ້ານທີ່ **ກ** ອາໄສຢູ່ນັ້ນ ຫຼື ນາຍທະບຽນສານໃນທັນໃດ, ໃນກໍລະນີ **ກ** ຫາກຫາຍດີ ຫຼື ສຸຂະພາບໄດ້ກັບຄືນສູ່ສະພາບປົກກະຕິ ຈາກນັ້ນ ໜຶ່ງເດືອນ ພິໄນກຳດັ່ງກ່າວບໍ່ສາມາດໃຊ້ໄດ້ ຖືກລົບລ້າງໂດຍອັດຕະໂນມັດ. **2. ກ** ເດີນທາງໄປທ່ຽວ ເຮືອທີ່ **ກ** ໂດຍສານເກີດອຸປະຕິເຫດຈົມລົງໃນທະເລ, ລະຫວ່າງທີ່ລອຍຢູ່ໃນທະເລຫຼາຍມື້ **ກ** ຮູ້ສຶກໝົດແຮງກຳລັງຊີຈົມນ້ຳຕາຍ **ກ** ໄດ້ບອກໃຫ້ **ຂ** ທີ່ເປັນເພື່ອນຮ່ວມເດີນທາງໂດຍບອກຈຸດປະສົງມອບເງິນໃນບັນຊີທີ່ຕົນມີນັ້ນໃຫ້ແກ່ **ຄ** ຜູ້ເປັນລູກ ຈຳນວນ 200.000.000 ກີບ ແລະ **ສ** ຜູ້ເປັນຫຼານຈຳນວນ 50.000.000 ກີບ ໂດຍເວລາທີ່ກສັ່ງຄວາມໄວ້ນັ້ນມີ **ຍ** ແລະ **ຊ** ເປັນພະຍານຮັບຮູ້ນຳນັ້ນຖືວ່າຄຳສັ່ງຂອງກນັ້ນເປັນພິໄນກຳປາກເປົ່າຂອງ **ກ**, ພາຍຫຼັງທີ່ເດີນທາງ ຫຼື ໄດ້ຮັບການຊ່ວຍເຫຼືອຂຶ້ນຮອດຝັ່ງແລ້ວ **ຂ** ຕ້ອງໄດ້ແຈ້ງທຸກຂໍ້ຄວາມຂອງ **ກ** ຕໍ່ອົງການປົກຄອງບ້ານທີ່ **ກ** ອາໄສຢູ່ນັ້ນຫຼື ນາຍທະບຽນສານໃນທັນໃດ ພ້ອມຊີ້ແຈງສາເຫດທີ່ **ກ** ບໍ່ສາມາດມາແຈ້ງດ້ວຍໂຕເອງໄດ້ເພື່ອໃຫ້ຫ້ອງການທະບຽນສານ ຫຼື ອົງການປົກຄອງບ້ານນັ້ນບັນທຶກໄວ້. **3.** ຍ້ອນສາເຫດອື່ນທີ່ພາໃຫ້ເຈົ້າຊັບຕົກຢູ່ໃນສະພາບອັນຕະລາຍໃກ້ຈະເສຍຊີວິດ ເປັນຕົ້ນແມ່ນ ໃນລະຫວ່າງການອອກສະໜາມຣົບ ໄດ້ຮັບບາດເຈັບສາຫັດ, ປະສົບໄພທຳມະຊາດ ແຜ່ນດິນໄຫວ (ຕິດຢູ່ກ້ອງຊາກຕຶກ ອາຄານ)…ຊຶ່ງເຈົ້າຊັບຄິດວ່າຕົນເອງຕ້ອງເສຍຊີວິດແນ່ນອນໃນເຫດການທີ່ເກີດຂຶ້ນ ແລ້ວຜູ້ກ່ຽວກໍສາມາດແຈ້ງຈຸດປະສົງສຸດທ້າຍຂອງຕົນໃຫ້ແກ່ບຸກຄົນອື່ນພ້ອມດ້ວຍພະຍານເພື່ອໃຫ້ໄປແຈ້ງເຈດຈຳນົງຂອງຕົນຕໍ່ຄອບຄົວ ແລະ ອົງການປົກຄອງບ້ານ ຫຼື ຫ້ອງການທະບຽນສານຜູ້ທີ່ຮັບຊາບການແຈ້ງຈຸດປະສົງຂອງເຈົ້າຊັບນັ້ນຕ້ອງໄດ້ແຈ້ງທຸກຂໍ້ຄວາມຂອງກຕໍ່ຄອບຄົວ ແລະ ອົງການປົກຄອງບ້ານ ຫຼື ຫ້ອງການທະບຽນສານພ້ອມທັງຊີ້ແຈງສາເຫດທີ່ເຈົ້າຊັບບໍ່ສາມາດເຮັດພິໄນກຳເປັນລາຍລັກອັກສອນໄດ້ເພື່ອໃຫ້ຫ້ອງການທະບຽນສານ ຫຼື ອົງການປົກຄອງບ້ານນັ້ນບັນທຶກໄວ້, ຈາກເຫດການຕ່າງໆທີ່ເກີດຂຶ້ນ ເຈົ້າຊັບຫາກຄິດວ່າຕ້ອງເສຍຊີວິດແຕ່ບໍ່ເສຍຊີວິດ ຫຼື ຈາກເຈັບປ່ວຍກັບມາແຂງແຮງຄືນໂດຍກັບມາໃຊ້ຊີວິດປົກກະຕິນັ້ນແລ້ວ ຜົນທາງດ້ານກົດໝາຍຂອງພິໄນກຳຈະໃຊ້ບໍ່ໄດ້ຖ້າຫາຍກາຍກຳນົດເວລາ 1 ເດືອນ ນັບແຕ່ມື້ ກ ກັບມາໃຊ້ຊີວິດປົກກະຕິ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 28 ຂອງກົດໝາຍວ່າດ້ວຍການສືບທອດມູນມໍຣະດົກປີ 2008 ພິໄນກຳທາງປາກເປົ່າ ແມ່ນໄດ້ກຳນົດຈຳນວນຂອງພະຍານໃຫ້ມີພະຍານຮັບຮູ້ນຳຢ່າງໜ້ອຍ 3 ຄົນ ແຕ່ໃນປະມວນກົດໝາຍແພ່ງ ປັບປຸງໃຫ້ມີພຽງແຕ່ພະຍານຮັບຮູ້ນຳເທົ່ານັ້ນບໍ່ໄດ້ລະບຸຈຳນວນຂອງພະຍານວ່າມີເທົ່າໃດແລະ ປ່ຽນແປງຄຳສັບທີ່ວ່າ "ສຳນັກງານທະບຽນສານ" ມາເປັນ "ຫ້ອງການທະບຽນສານ" ເພື່ອໃຫ້ສອດຄ່ອງກັບກົດໝາຍວ່າດ້ວຍທະບຽນສານ ກຳນົດເວລາໜຶ່ງເດືອນໃນມາດຕານີ້ແມ່ນນັບເວລາໜຶ່ງເດືອນຕາມປະຕິທິນສາກົນ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 1663 ແລະ 1664 ຂອງປະມວນກົດໝາຍແພ່ງ ແລະ ພານິດໄທ; ມາດຕາ 976, 977, 978, 979 ແລະ 983 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.

ມາດຕາອ້າງອີງ	ມາດຕາ 20 ກົດໝາຍວ່າດ້ວຍທະບຽນສານ ປີ 2009.
ຂໍ້ມູນອື່ນຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 597 ຜູ້ສືບທອດສຳຮອງ

ເຈົ້າຂອງຊັບ ມີສິດກຳນົດຜູ້ສືບທອດສຳຮອງໄວ້ໃນພິໄນກຳເພື່ອແທນທີ່ຜູ້ສືບທອດມູນມໍຣະດົກຊຶ່ງຕົນໄດ້ກຳນົດໄວ້ແລ້ວນັ້ນໃນກໍລະນີທີ່ຜູ້ສືບທອດຜູ້ນັ້ນຫາກໄດ້ເສຍຊີວິດກ່ອນການເປີດພິໄນກຳ ຫຼື ການສືບທອດ ຫຼື ບໍ່ຮັບເອົາມູນມໍຣະດົກຕາມພິໄນກຳນັ້ນ.

ຈຸດປະສົງ	ເພື່ອໃຫ້ຮູ້ການກຳນົດຜູ້ສືບທອດສຳຮອງໄດ້ ໃນກໍລະນີທີ່ຜູ້ສືບທອດມູນມໍຣະດົກທີ່ໄດ້ກຳນົດໄວ້ແລ້ວນັ້ນ ຫາກເສຍຊີວິດກ່ອນພິນິກຳມີຜົນ ຫຼື ກໍລະນີທີ່ຜູ້ສືບທອດປະຕິເສດບໍ່ຮັບເອົາມູນມໍຣະດົກ.
ຕົວຢ່າງ	**1: ກ** ເຮັດພິໄນກຳໄວ້ເພື່ອໃຫ້ **ຂ** ມີສິດໄດ້ຮັບມູນມໍຣະດົກຂອງຜູ້ກ່ຽວ ເປັນທີ່ດິນນາຈຳນວນ 2 ເຮັກຕາ ພ້ອມກັນນັ້ນຍັງໄດ້ກຳນົດໄວ້ຕື່ມວ່າຖ້າຫາກ **ຂ** ຫາກເສຍຊີວິດກ່ອນການເປີດພິໄນກຳ ຫຼື ປະຕິເສດບໍ່ຮັບ ກໍໃຫ້ **ຄ** ລູກຂອງຜູ້ກ່ຽວ ມີສິດຮັບຕາມພິໄນກຳນີ້. **2: ກ** ເຮັດພິໄນກຳໄວ້ເພື່ອໃຫ້ **ຂ** ທີ່ເປັນລູກເງິນຈຳນວນ 20.000.000 ກີບ ພ້ອມກຳນົດໄວ້ຕື່ມວ່າຖ້າຫາກ **ຂ** ຫາກເສຍຊີວິດກ່ອນການເປີດພິໄນກຳ ຫຼື ປະຕິເສດບໍ່ຮັບແລ້ວໃຫ້ **ງ** ພະນັກງານຂັບລົດໃນບໍລິສັດຂອງ **ກ** ມີສິດຮັບຕາມພິໄນກຳແທນທີ່ **ຂ**.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 29 ຂອງກົດໝາຍວ່າດ້ວຍການສືບທອດມູນມໍຣະດົກ ປີ 2008 ຜູ້ສືບທອດສຳຮອງແມ່ນໄດ້ກຳນົດໄວ້ວ່າ: "ເຈົ້າຂອງຊັບມີສິດແຕ່ງຕັ້ງຜູ້ສືບທອດສຳຮອງ" ປະມວນກົດໝາຍແພ່ງໄດ້ປັບປຸງມາເປັນ "ເຈົ້າຂອງຊັບມີສິດກຳນົດຜູ້ສືບທອດສຳຮອງ "ເພາະຜູ້ທີ່ຖືກກຳນົດໄວ້ນັ້ນອາດຈະປະຕິເສດບໍ່ຮັບເອົາຊັບນັ້ນ ຫຼື ເສຍຊີວິດກ່ອນການເປີດພິໄນກຳເພື່ອເປັນການເຂົ້າໃຈງ່າຍ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ສືບຕໍ່ຄົ້ນຄວ້າ.
ຂໍ້ມູນອື່ນຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 598 ສິດຂອງຜູ້ສືບທອດມູນມໍຣະດົກຕາມພິໄນກຳ

ຜູ້ສືບທອດທີ່ໄດ້ຮັບມູນມໍຣະດົກຕາມພິໄນກຳແລ້ວ ກໍຍັງມີສິດໄດ້ຮັບພູດສ່ວນມູນມໍຣະດົກທີ່ຕົກທອດໃຫ້ຕົນຕາມກົດໝາຍອີກດ້ວຍ.

ຈຸດປະສົງ	ເພື່ອກຳນົດໃຫ້ເຫັນວ່າ ຜູ້ມີສິດສືບທອດມູນມໍຣະດົກ ໄດ້ຮັບມູນມໍຣະດົກຕາມພິໄນກຳແລ້ວ ກໍຍັງມີສິດໄດ້ຮັບການສືບທອດຕາມກົດໝາຍໄດ້ອີກ.
ຕົວຢ່າງ	**1: ກ** ມີມູນມໍຣະດົກມີມູນຄ່າ ຈຳນວນ100.000.000 ກີບ ຜູ້ມີສິດສືບທອດມູນມໍຣະດົກ 4 ຄົນຄື: **ຂ**, **ຄ**, **ງ** ແລະ **ສ.ສ** ໄດ້ຮັບມູນມໍຣະດົກຕາມພິໄນກຳແລ້ວ ຈຳນວນ 20.000.000 ກີບ, ມູນມໍຣະດົກທີ່ຍັງເຫຼືອ ຈຳນວນ 80.000.000 ກີບ ນັ້ນສຍັງມີສິດໄດ້ຮັບຕາມການແບ່ງປັນຕາມກົດໝາຍອີກ ຄື: ເງິນຈຳນວນ 80.000.000 ກີບ ແບ່ງປັນໃຫ້ 4 ຄົນ ຜູ້ລະ 20.000.000 ກີບ, ເງິນຈຳນວນ 20.000.000 ກີບ ບໍ່ໄດ້ລະເມີດມາດຕາ 592 ວັກ 1 ຂໍ້ 3 ຂອງປະມວນກົດໝາຍແພ່ງ. ສະນັ້ນ ພິໄນກຳດັ່ງກ່າວມີຜົນປະຕິບັດໄດ້.

	2: ກ ມີທີ່ດິນປຸກສ້າງ ແລະ ເຮືອນ (ມູນຄ່າຈຳນວນ 300.000.000 ກີບ) ແລະ ເງິນໃນບັນຊີທະນາຄານຈຳນວນ 200.000.000 ກີບ, **ກ** ມີລູກ 2 ຄົນ ຄື: **ຂ** ແລະ **ຄ**, **ກ** ເຮັດພິໄນກຳມອບເງິນໃນບັນຊີທະນາຄານໃຫ້ **ຂ** ຈຳນວນ 100.000.000 ກີບ, ເມື່ອ **ກ** ເສຍຊີວິດແລ້ວ **ຂ** ໄດ້ຮັບມູນມໍຣະດົກຕາມພິໄນກຳ ຈຳນວນ 100.000.000 ກີບ ແລ້ວ, **ຂ** ຍັງມີສິດສືບທອດຕາມກົດໝາຍຄືກັນກັບ **ຄ** ໝາຍວ່າຍັງມີສິດສືບທອດທີ່ດິນປຸກສ້າງ ແລະ ເຮືອນ ພ້ອມດ້ວຍເງິນຈຳນວນ 100.000.000 ກີບ ທີ່ຍັງເຫຼືອຢູ່ໃນບັນຊີທະນາຄານນັ້ນ.
ເຫດຜົນໃນການຮັກສາເດີມ	ມາດຕານີ້ຮັກສາເນື້ອໃນເດີມມາດຕາ 30 ຂອງກົດໝາຍວ່າດ້ວຍການສືບທອດມູນມໍຣະດົກ ສະບັບປີ 2008 ໄວ້ຄືເກົ່າ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 903 ແລະ 904 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 573 ຂໍ້ 5 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 599 ຜູ້ຄຸ້ມຄອງມູນມໍຣະດົກຕາມພິໄນກຳ

ເຈົ້າຂອງຊັບມີສິດກຳນົດຜູ້ຄຸ້ມຄອງມູນມໍຣະດົກໄວ້ໃນພິໄນກຳໃນກໍລະນີທີ່ຜູ້ກ່ຽວຫາກມີຈຸດປະສົງເຮັດພິໄນກຳ ມອບມູນມໍຣະດົກໃຫ້ບຸກຄົນທີ່ຍັງບໍ່ທັນເຖິງກະສຽນອາຍຸ ຫຼື ເປັນບ້າເສຍຈິດ.

ຜູ້ຄຸ້ມຄອງມູນມໍຣະດົກນັ້ນອາດຈະກຳນົດບຸກຄົນອື່ນເປັນຜູ້ຄຸ້ມຄອງມູນມໍຣະດົກແທນຕົນກໍໄດ້, ເວັ້ນເສຍແຕ່ເຈົ້າຂອງຊັບ ຫາກໄດ້ກຳນົດໄວ້ເປັນຢ່າງອື່ນໃນພິໄນກຳ.

ຈຸດປະສົງ	ເພື່ອກຳນົດຜູ້ຄຸ້ມຄອງມູນມໍຣະດົກໄວ້ໃນພິໄນກຳໄດ້ ເພື່ອຄຸ້ມຄອງຊັບໃຫ້ແກ່ບຸກຄົນທີ່ຍັງບໍ່ທັນເຖິງກະສຽນອາຍຸ ຫຼື ບຸກຄົນທີ່ເປັນບ້າເສຍຈິດ ໃນກໍລະນີທີ່ເຈົ້າມູນມໍຣະດົກມອບມູນໃຫ້ພວກກ່ຽວ.
ຕົວຢ່າງ	**ກ** ແຕ່ງດອງກັບ **ຂ** ມີລູກຄື :**ຄ** ອາຍຸ 16 ປີ ແລະ **ງ** ທີ່ພົ້ນກະສຽນ ອາຍຸແລ້ວ. ກ ມີຊັບເດີມເປັນທີ່ດິນນາໝົ່ງຕອນ ແລະ ທີ່ດິນປຸກສ້າງໝົ່ງຕອນພ້ອມເຮືອນ, ຕໍ່ມາ **ກ** ເຈັບປ່ວຍໜັກ ຈຶ່ງເຮັດພິໄນເອົາ ທີ່ດິນນາຊັບເດີມຂອງ **ກ** ມອບໃຫ້ **ຄ**, ທີ່ດິນພ້ອມເຮືອນໃຫ້ **ງ** ພ້ອມໄດ້ແຕ່ງຕັ້ງ (ກຳນົດໄວ້ໃນພິໄນກຳ) ໃຫ້ **ຈ** ຫຼານຊາຍ ເປັນຜູ້ຄຸ້ມຄອງພູດທີ່ເປັນຂອງ **ຄ**. 1. ກໍລະນີທີ່ກຳນົດໄວ້ໃນພິໄນກຳ: ພາຍຫຼັງ ກ ເສຍຊີວິດ,**ຈ** ໄດ້ເຂົ້າຄຸ້ມຄອງທີ່ດິນນາ ໄວ້ໃຫ້ **ຄ** ຕາມພິໄນກຳ ແຕ່ **ຈ** ບໍ່ໄດ້ຄຸ້ມຄອງ ສ່ວນທີ່ມອບໃຫ້ **ງ** ເພາະ **ງ** ພົ້ນກະສຽນອາຍຸແລ້ວ ແລະ ພິໄນກຳກໍບໍ່ໄດ້ກຳນົດໃຫ້ **ຈ** ຄຸ້ມຄອງ. 2. ກໍລະນີທີ່ບໍ່ໄດ້ກຳນົດໄວ້ໃນພິໄນກຳ: ກ່ອນ **ກ** ເສຍຊີວິດ, **ກ** ໄດ້ເງິນໄປຝາກໄວ້ນຳທະນາຄານໃຫ້**ຄ**(ລູກ)ເງິນຈຳນວນ10.000.000ກີບ,ບັນຊີດັ່ງກ່າວອອກເປັນຊື່ ຂອງ **ຄ**, ພາຍຫຼັງ **ກ** ເສຍຊີວິດ, **ຂ (ແມ່ ຄ)** ເປັນຜູ້ຄຸ້ມຄອງເງິນພ້ອມດ້ວຍດອກເບ້ຍດັ່ງກ່າວ ໄວ້ໃຫ້ **ຄ** ຍ້ອນວ່າ ຄ ບໍ່ທັນພົ້ນກະສຽນ ແລະ **ຂ** ເປັນຜູ້ຄຸ້ມຄອງຕາມທີ່ກຳນົດໄວ້ໃນວັກ 2 ມາດຕາ 219 ຂອງປະມວນກົດໝາຍແພ່ງ, ແຕ່ **ຈ** ບໍ່ສາມາດຄຸ້ມຄອງເງິນຈຳນວນ 10.000.000 ກີບ ຍ້ອນວ່າ ບໍ່ໄດ້ກຳນົດໃນພິໄນກຳ.

ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກມາດຕາ 32 ຂອງກົດໝາຍວ່າດ້ວຍການສືບທອດມູນມໍຣະດົກປີ 2008 ຜູ້ຄຸ້ມຄອງມູນມໍຣະດົກຕາມພິໄນກຳປ່ຽນຄຳສັບຈາກຄຳວ່າ: "ເຈົ້າຂອງຊັບ ມີສິດແຕ່ງຕັ້ງຜູ້ຄຸ້ມຄອງມູນມໍຣະດົກ "ມາເປັນ "ເຈົ້າຂອງຊັບ ມີສິດກຳນົດຜູ້ຄຸ້ມຄອງມູນມໍຣະດົກຕາມພິໄນກຳ" ພ້ອມກັນນັ້ນ ກໍໄດ້ຕັດວັກ 3 ຂອງມາດຕາ 32 ຂອງກົດໝາຍວ່າດ້ວຍການສືບທອດມູນມໍຣະດົກ ປີ 2008 ກ່ຽວກັບການສິ້ນສຸດການຄຸ້ມຄອງມໍຣະດົກ ແລ້ວນຳໄປໄວ້ຢູ່ວັກສຸດທ້າຍ ຂອງມາດຕາ 623 ຂອງປະມວນກົດໝາຍແພ່ງ. ໃນກໍລະນີທີ່ມີການກຳນົດຜູ້ຄຸ້ມຄອງມູນມໍຣະດົກຕາມພິໄນກຳ, ຜູ້ຄຸ້ມຄອງມູນມໍຣະດົກ ມີສິດແຕ່ຄຸ້ມຄອງມູນມໍຣະດົກຕາມທີ່ກຳນົດໄວ້ພິໄນກຳເທົ່ານັ້ນ, ໃນນີ້ ພໍ່ ຫຼື ແມ່ຂອງເດັກທີ່ຍັງບໍ່ທັນພົ້ນກະສຽນອາຍຸ ຫຼື ຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດ ບໍ່ມີສິດໄປຄຸ້ມຄອງມູນມໍຣະດົກທີ່ໄດ້ມີການກຳນົດຜູ້ຄຸ້ມຄອງຕາມພິໄນກຳອີກ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 2197 ຂອງປະມວນກົດໝາຍແພ່ງເຢຍລະມັນ.
ມາດຕາອ້າງອີງ	ມາດຕາ 620, 621, 622, 623 ແລະ624 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 600 ການປ່ຽນແປງຫຼືລົບລ້າງພິໄນກຳ

ເຈົ້າຂອງຊັບມີສິດປ່ຽນແປງຫຼືລົບລ້າງພິໄນກຳທີ່ຕົນເຮັດຂຶ້ນ ໄດ້ທຸກເວລາດ້ວຍການເຮັດພິໄນກຳໃໝ່. ພິໄນກຳທີ່ເຮັດຂຶ້ນໃໝ່ນີ້ຈະລົບລ້າງພິໄນກຳເກົ່າສ່ວນໃດໜຶ່ງ ຫຼື ທັງໝົດທີ່ມີຂໍ້ຄວາມຂັດກັບພິໄນກຳໃໝ່.

ຈຸດປະສົງ	ເພື່ອກຳນົດກ່ຽວກັບການປ່ຽນແປງ ຫຼື ລົບລ້າງພິໄນກຳໂດຍເຈົ້າຂອງຊັບ.
ຕົວຢ່າງ	**1 ການປ່ຽນແປງພິໄນກຳ: ກ** ແຕ່ງດອງກັບ **ຂ**ມີລູກ 2 ຄົນຄື:**ຄ** ແລະ **ງ**. ກ ມີຊັບເດີມ ທີ່ດິນ 1 ຕອນ ແລະ ເງິນຈຳນວນ 10.000.000 ກີບ, ເນື່ອງຈາກສຸຂະພາບຊຸດ�โຊມລົງ **ກ** ເຮັດພິໄນກຳດ້ວຍຕົນເອງ ມອບ ຊັບເດີມຂອງຕົນ ໃຫ້ແກ່ **ຄ** ຜູ້ເປັນລູກ. ຕໍ່ມາ **ກ** ເຫັນວ່າ ບໍ່ເໝາະສົມ ທີ່ຈະເອົາຊັບດັ່ງກ່າວໃຫ້ແຕ່ລູກຜູ້ດຽວ ຈຶ່ງປ່ຽນແປງເນື້ອໃນພິໄນກຳ ດ້ວຍຕົນເອງໂດຍມອບທີ່ດິນດັ່ງກ່າວ ໃຫ້ **ຄ** ແລະ **ງ** ຄົນລະເຄິ່ງ. **2 ການລົບລ້າງພິໄນກຳ: ກ** ແຕ່ງດອງກັບ **ຂ**, ມີລູກ 2 ຄົນຄື: **ຄ** ແລະ **ງ**. **ກ** ມີຊັບເດີມ ທີ່ດິນ 1 ຕອນ ແລະ ເງິນຈຳນວນ 10.000.000 ກີບ, ວັນທີ 01 ມັງກອນ 2021ເນື່ອງຈາກສຸຂະພາບຊຸດ�โຊມລົງ **ກ** ເຮັດພິໄນກຳ ມອບທີ່ເປັນຊັບເດີມຂອງຕົນ ໃຫ້ **ຄ** ຜູ້ເປັນລູກ. ຕໍ່ມາ ວັນທີ 01 ມີຖຸນາ 2021 **ກ** ເຫັນວ່າ ພິໄນກຳດັ່ງກ່າວບໍ່ເໝາະສົມ ຈຶ່ງສ້າງພິໄນກຳ ສະບັບໃໝ່ຂຶ້ນໂດຍມີເນື້ອໃນມອບທີ່ດິນ 1 ຕອນ ໃຫ້ **ຂ** ແລະ ເງິນຈຳນວນ 10.000.000 ກີບ ໃຫ້ **ງ**. ພິໄນກຳຄັ້ງວັນທີ 01 ມີຖຸນາ 2021 ຈຶ່ງເປັນພິໄນກຳໃໝ່ທີ່ລົບລ້າງຂໍ້ຄວາມທັງໝົດໃນພິໄນກຳ ສະບັບວັນທີ 01 ມັງກອນ 2021. 3. **ກ** ແຕ່ງດອງກັບ **ຂ** ມີລູກ 2 ຄົນຄື: **ຄ** ແລະ **ງ**,ມື້ໜຶ່ງ **ກ** ເກີດອຸບປະຕິເຫດລົດປີ້ນລົງເຫວ **ກ** ບາດເຈັບສາຫັດ ໄດ້ສັ່ງຄວາມໄວ້ ກັບ **ສ** ຜູ້ທີ່ຮ່ວມເດີນທາງ ເພື່ອມອບທີ່ດິນ 1 ຕອນ ແລະ ເງິນຈຳນວນ 10.000.000 ກີບ ທີ່ເປັນຊັບເດີມຂອງຕົນ ໃຫ້ **ຄ** ຜູ້ເປັນລູກ.ຕໍ່ມາ **ກ** ໄດ້ຮັບການຊ່ວຍເຫຼືອ ແລະ ຮັກສາຈົນຫາຍດີແຂງແຮງ, **ກ** ເຫັນວ່າບໍ່ເໝາະສົມ ຈຶ່ງລົບລ້າງພິໄນກຳປາກເປົ່ານັ້ນໂດຍສ້າງພິໄນກຳໃໝ່ທີ່ເປັນລາຍລັກອັກສອນຂຶ້ນເພື່ອມອບເງິນຈຳນວນ 5.000.000 ກີບໃຫ້ແກ່ **ຄ**. ດັ່ງນັ້ນ ພິໄນກຳທີ່ສ້າງຂຶ້ນໃໝ່ນີ້ແມ່ນໄດ້ລົບລ້າງຂໍ້ຄວາມບາງສ່ວນຂອງພິໄນກຳເກົ່າ (ພິໄນກຳປາກເປົ່າ).

ເຫດຜົນໃນການຮັກສາເນື້ອໃນເດີມ	ມາດຕານີ້ຮັກສາເນື້ອໃນເດີມ ມາດຕາ 33 ຂອງກົດໝາຍວ່າດ້ວຍການສືບທອດມູນມໍຣະດົກ ສະບັບປີ 2008 ໄວ້ຄືເກົ່າ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 1022, 1023, 1024, 1025 ແລະ 1026 ຂອງປະມວນກົດໝາຍແພ່ງ ຍີ່ປຸ່ນ. ມາດຕາ 2253 ແລະ 2258 ຂອງປະມວນກົດໝາຍແພ່ງເຢຍລະມັນ.
ມາດຕາອ້າງອີງ	ມາດຕາ 590 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 601 ສາເຫດທີ່ພາໃຫ້ພິໄນກຳຕົກໄປ

ພິໄນກຳທີ່ເຮັດຂຶ້ນຈະຕົກໄປດ້ວຍສາເຫດດັ່ງນີ້:

1. ເມື່ອຜູ້ສືບທອດມູນມໍຣະດົກຕາມພິໄນກຳ ຫາກໄດ້ເສຍຊີວິດກ່ອນເຈົ້າມູນມໍຣະດົກ;
2. ເມື່ອຜູ້ສືບທອດມູນມໍຣະດົກຕາມພິໄນກຳຫາກໄດ້ສະລະມູນມໍຣະດົກພູດທີ່ຕົນມີສິດໄດ້ຮັບຕາມພິໄນກຳ;
3. ເມື່ອຊັບສົມບັດທີ່ຕົກທອດຕາມພິໄນກຳນັ້ນຫາກໄດ້ຖືກສູນຫາຍ ຫຼື ຖືກທຳລາຍດ້ວຍເຈົ້າມູນມໍຣະດົກ ກ່ອນການເປີດການສືບທອດມູນມໍຣະດົກ;
4. ເມື່ອພິໄນກຳນັ້ນ ຫາກໄດ້ຖືກຮັບຮູ້ວ່າເປັນໂມຄະ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 602 ຂອງປະມວນກົດໝາຍສະບັບນີ້.

ຈຸດປະສົງ	ເພື່ອກຳນົດສາເຫດທີ່ພາໃຫ້ພິໄນກຳຕົກໄປ
ຕົວຢ່າງ	**1. ຜູ້ສືບທອດມູນມໍຣະດົກເສຍຊີວິດກ່ອນເຈົ້າມູນມໍຣະດົກ:** **ກ** ແຕ່ງດອງກັບ **ຂ** ມີລູກ 2 ຄົນ ຄື: **ຄ** ແລະ **ງ**, **ກ** ມີຊັບເດີມຄື ທີ່ດິນ 1 ຕອນ ແລະ ເງິນຈຳນວນ 10.000.000 ກີບ, **ກ** ເຮັດພິໄນກຳ ມອບຊັບເດີມຂອງຜູ້ກ່ຽວຄື: ທີ່ດິນ 1 ໃຫ້ **ຄ** ແລະ ເງິນໃຫ້ **ງ**, ໃຫ້ **ງ**, ຕໍ່ມາ **ຄ** ເກີດອຸບປະຕິເຫດ ແລະ ເສຍຊີວິດ. ພິໄນກຳ ໃນສ່ວນທີ່ເປັນຂອງ **ຄ** ຈຶ່ງຕົກໄປແຕ່ສຳລັບພິໄນກຳ ໃນສ່ວນທີ່ເປັນຂອງ **ງ** ນັ້ນແມ່ນຍັງມີຜົນທາງດ້ານກົດໝາຍ. **2. ຜູ້ສືບທອດມູນມໍຣະດົກຕາມພິໄນກຳໄດ້ສະລະມູນມໍຣະດົກພູດທີ່ຕົນໄດ້ຮັບຕາມພິໄນກຳ:** **ກ** ແຕ່ງດອງກັບ **ຂ** ມີລູກ 2 ຄົນຄື: **ຄ** ແລະ **ງ**, **ກ** ມີຊັບເດີມຄື ທີ່ດິນ 1 ຕອນ ແລະ ເງິນຈຳນວນ 10.000.000 ກີບ, **ກ** ເຮັດພິໄນກຳ ມອບຊັບເດີມຂອງຜູ້ກ່ຽວຄື: ທີ່ດິນ 1 ຕອນ ໃຫ້ **ຄ**ແລະ ເງິນຈຳນວນ 10.000.000 ກີບ ໃຫ້ **ງ**, ພາຍຫຼັງທີ່ **ກ** ເສຍຊີວິດ, ໃນເວລາເປີດການສືບທອດມູນມໍຣະດົກ**ຄ** ໄດ້ສະລະມູນມໍຣະດົກຕາມພິໄນກຳນັ້ນ. ພິໄນກຳໃນສ່ວນທີ່ເປັນຂອງ **ຄ** ຈຶ່ງຕົກໄປ. ແຕ່ສຳລັບພິໄນກຳທີ່ເປັນຂອງ **ງ** ນັ້ນ ແມ່ນຍັງມີຜົນທາງດ້ານກົດໝາຍ. **3. ຊັບສົມບັດທີ່ຕົກທອດນັ້ນຖືກສູນຫາຍ ຫຼື ທຳລາຍໂດຍເຈົ້າມູນກ່ອນການເປີດການສືບທອດມູນມໍຣະດົກ:** **ກ** ແຕ່ງດອງກັບ **ຂ** ມີລູກ 2 ຄົນຄື: **ຄ** ແລະ **ງ**, ວັນທີ 1 ມີຖຸນາ 2021 **ກ** ເຮັດພິໄນກຳ ເພື່ອມອບລົດ 1 ຄັນທີ່ເປັນຊັບເດີມຂອງຕົນໃຫ້ **ຄ** ຜູ້ເປັນລູກ, ວັນທີ 10 ພະຈິກ 2021 **ກ** ຂັບຂີ່ໄປເກີດອຸບປະຕິເຫດ ພາໃຫ້ລົດຖືກໄຟໄໝ້ໝົດທັງຄັນ ຈົນບໍ່ສາມາດໃຊ້ງານໄດ້, ກ່ອນມີການເປີດການສືບທອດມູນມໍຣະດົກ. ພິໄນກຳ ຈຶ່ງຕົກໄປ. **4: ພິໄນກຳເປັນໂມຄະ:** ແມ່ນໃຫ້ເບິ່ງຕົວຢ່າງຕາມມາດຕາ 602 ຂອງປະມວນກົດໝາຍແພ່ງ.

ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 34 ຂອງກົດໝາຍວ່າດ້ວຍການສືບທອດມູນມໍຣະດົກ ປີ 2008 ເພື່ອຄວາມຈະແຈ້ງກ່ຽວກັບເວລາປະມວນກົດໝາຍແພ່ງ ໄດ້ເພີ່ມເຕີມຂໍ້ຄວາມທີ່ວ່າ: "ກ່ອນການເປີດການສືບທອດມູນມໍຣະດົກ" ໃສ່ໃນວັກສຸດທ້າຍໃນຂໍ້ 3 ຂອງມາດຕານີ້ ຊຶ່ງໃນກົດໝາຍເກົ່າແມ່ນບໍ່ໄດ້ກຳນົດໄວ້ແລະໃນຂໍ້ທີ 4 ຂອງມາດຕານີ້ໄດ້ເພີ່ມຂໍ້ຄວາມທີ່ວ່າ: "ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 602 ຂອງປະມວນກົດໝາຍສະບັບນີ້" ເພື່ອໃຫ້ເຂົ້າໃຈງ່າຍ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 896, 994 ແລະ 995 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ; ມາດຕາ 1698 ຂອງປະມວນກົດໝາຍແພ່ງ ແລະ ພານິດໄທ.
ມາດຕາອ້າງອີງ	ມາດຕາ 595, 602 ແລະ 612 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ602 ພິໄນກຳເປັນໂມຄະ

ພິໄນກຳເປັນໂມຄະ ມີກໍລະນີ ດັ່ງນີ້:

1. ພິໄນກຳ ທີ່ເຮັດຂຶ້ນໂດຍບຸກຄົນທີ່ບໍ່ມີຄວາມສາມາດທາງດ້ານການປະພຶດ;
2. ພິໄນກຳ ທີ່ມີເປົ້າໝາຍບໍ່ຈະແຈ້ງ;
3. ພິໄນກຳ ທີ່ເຮັດຂຶ້ນດ້ວຍການຖືກບັງຄັບ, ຫຼອກລວງ ຫຼື ປອມແປງ;
4. ພິໄນກຳ ທີ່ໄດ້ມອບຊັບໃຫ້ແກ່ບຸກຄົນ ຊຶ່ງໄດ້ກຳນົດໄວ້ໃນມາດຕາ 595 ຂອງປະມວນກົດໝາຍສະບັບນີ້.

ຈຸດປະສົງ	ເພື່ອໃຫ້ຮູ້ກ່ຽວກັບ ກໍລະນີພິໄນກຳເປັນໂມຄະ.
ຕົວຢ່າງ	**1: ພິໄນກຳ ທີ່ເຮັດຂຶ້ນໂດຍບຸກຄົນທີ່ບໍ່ມີຄວາມສາມາດທາງດ້ານການປະພຶດ.** **ກ** ແລະ **ຂ** ມີທີ່ດິນ 1ຕອນພ້ອມເຮືອນກໍ່ສອງຊັ້ນໜຶ່ງຫຼັງ, ພວກກ່ຽວມີລູກ1 ຄົນຄື: **ຄ** ອາຍຸ 15 ປີ, **ກ** ແລະ **ຂ** ເກີດອຸບປະຕິເຫດເສຍຊີວິດທັງໝົດ. **ຄ** ສືບທອດມູນມໍຣະດົກຂອງພໍ່ແມ່ຕາມກົດໝາຍ, ສານໄດ້ແຕ່ງຕັ້ງ **ງ** (ນ້ອງພໍ່) ເປັນຜູ້ປົກຄອງ **ຄ**. ຕໍ່ມາຄະເຈັບປ່ວຍເຂົ້າປິ່ນປົວຢູ່ໂຮງໝໍຄິດວ່າຕົນອາດຈະຕາຍຈຶ່ງເຮັດພິໄນກຳມອບທີ່ດິນ ແລະ ເຮືອນໃຫ້ **ຈ** (ນ້ອງສາວແມ່) ໂດຍບໍ່ໄດ້ບອກໃຫ້ **ງ** ທີ່ເປັນຜູ້ປົກຄອງຮັບຮູ້ແລະເຫັນດີນຳ, ຕໍ່ມາໄດ້ 5 ເດືອນ **ງ** ຈຶ່ງຮູ້ຈັກການເຮັດພິໄນກຳດັ່ງກ່າວຈຶ່ງໄດ້ຄັດຄ້ານຕໍ່ພິໄນກຳ ແລະ ຂໍລົບລ້າງພິໄນກຳ ນັ້ນ ພາໃຫ້ພິໄນກຳດັ່ງກ່າວເປັນໂມຄະເນື່ອງຈາກວ່າ **ຄ** ບໍ່ທັນພົ້ນກະສຽນອາຍຸ ແລະ ພິໄນກຳນັ້ນບໍ່ໄດ້ຮັບການເຫັນດີຈາກ **ງ** ທີ່ເປັນຜູ້ປົກຄອງ (ຕາມມາດຕາ 72 ວັກ 2 ຂອງປະມວນກົດໝາຍແພ່ງ) **2 ພິໄນກຳທີ່ບໍ່ມີເປົ້າໝາຍຈະແຈ້ງ:** ກ່ອນແຕ່ງດອງ **ກ** ມີທີ່ດິນ 3 ຕອນ, ຕໍ່ມາ **ກ** ແຕ່ງດອງກັບ **ຂ**, ມີສິນສົມສ້າງຄື: ຊື້ທີ່ດິນພ້ອມເຮືອນ 1 ຫຼັງ, ມີລູກຮ່ວມກັນ 2 ຄົນຄື: **ຄ** ແລະ**ງ**. **ກ** ເຮັດພິໄນກຳມອບຊັບ ທີ່ເປັນຂອງ **ກ** ໃຫ້ພວກລູກຄື: ມອບທີ່ດິນທັງ 2 ຕອນໃຫ້ **ຄ** ແລະ 1 ຕອນໃຫ້ **ງ**, ພາຍຫຼັງເຮັດພິໄນກຳໄດ້ 1 ເດືອນຄເສຍຊີວິດ, ຫຼັງຈາກການເປີດພິໄນກຳເຮັດໃຫ້ເກີດຂໍ້ຂັດແຍ່ງກັນຂຶ້ນລະຫວ່າງພວກລູກນຳກັນເພາະຕ່າງຄົນຕ່າງຢາກໄດ້ທີ່ດິນບ່ອນມີລາຄາສູງ ແລະ ພິໄນກຳບໍ່ບອກຈະແຈ້ງວ່າທີ່ດິນທີ່ເປັນເປົ້າໝາຍຈະມອບໃຫ້ລູກນັ້ນມີຕອນໃດ, ຕັ້ງຢູ່ບ້ານໃດແຕ່ພາໃຫ້ພິໄນກຳດັ່ງກ່າວເປັນໂມຄະ.

3 ພິໄນກຳເຮັດຂຶ້ນດ້ວຍການບັງຄັບ, ຫຼອກລວງ ຫຼື ປອມແປງ

ກໍລະນີ1: ພິໄນກຳເຮັດຂຶ້ນດ້ວຍການບັງຄັບ
ຄ ຂົ່ມຂູ່ວ່າຈະຈູດເຮືອນຂອງພໍ່ແມ່ ຖ້າພໍ່ແມ່ຫາກບໍ່ຂຽນພິໄນກຳມອບຊັບທັງໝົດໃຫ້ **ຄ**, ພິໄນກຳດັ່ງກ່າວເຮັດຂຶ້ນດ້ວຍການບັງຄັບ ຈຶ່ງພາໃຫ້ເປັນໂມຄະ. ກໍລະນີນີ້ສິດໃນການເປັນຜູ້ສືບທອດຂອງ **ຄ** ກໍຈະເສຍໄປ (ມາດຕາ 618 ວັກ1 ຂໍ້ 4 ຂອງປະມວນກົດໝາຍແພ່ງ), ຖ້າ **ຄ** ເປັນຜູ້ທີ່ມີສິດໃນການສືບທອດ.

ກໍລະນີ 2: ພິໄນກຳເຮັດຂຶ້ນດ້ວຍການຫຼອກລວງ
ກ ມີລູກ 3 ຄົນຄື: **ຄ**, **ຈ** ແລະ **ງ**,**ຄ** ແລະ **ຈ** ຕົວະຍົວະຫຼອກລວງພໍ່ເພື່ອໃຫ້ເຮັດພິໄນກຳມອບຮຸ້ນໃນໂຮງແຮມ A ທີ່ເປັນກຳມະສິດຂອງພໍ່ນັ້ນໃຫ້ **ຄ** ແລະ **ຈ** ທັງໝົດໂດຍອ້າງວ່າງມີຄວາມໂລບມາກໂລພາຍາກໄດ້ຊັບສົມບັດໄປຂາຍໃຊ້ຈ່າຍສ່ວນຕົວແລະກຽດຊັງພໍ່ ພ້ອມບອກວ່າຖ້າພໍ່ຫາກເປັນຫຍັງໄປພວກຕົນຈະເປັນຜູ້ແບ່ງປັນໃຫ້ງຖືຮຸ້ນໃນໂຮງແຮມ 40%. ເມື່ອເປັນແນວນັ້ນເຮັດໃຫ້ພໍ່ ຫຼົງເຊື່ອເຮັດພິໄນກຳມອບຮຸ້ນຂອງຕົນໃຫ້ **ຄ** ແລະ **ຈ** ທັງໝົດ, ພິໄນກຳດັ່ງກ່າວເປັນໂມຄະຍ້ອນຜູ້ເຮັດພິໄນກຳຖືກຕົວະຍົວະຫຼອກລວງ. ກໍລະນີນີ້ ສິດໃນການເປັນຜູ້ສືບທອດຂອງ **ຄ** ແລະ **ຈ** ກໍຈະເສຍໄປ (ມາດຕາ 618 ວັກ1 ຂໍ້ 6ຂອງປະມວນກົດໝາຍແພ່ງ), ຖ້າ **ຄ** ແລະ **ຈ** ເປັນຜູ້ທີ່ມີສິດໃນການສືບທອດມູນມໍຣະດົກຂອງ **ກ**.

ກໍລະນີ 3: ພິໄນກຳເຮັດຂຶ້ນດ້ວຍການປອມແປງ
ໃນເມື່ອພໍ່ແມ່ເຖົ້າແກ່ສະລາ **ຄ** ແລະ **ຈ** ຢາກຈະເອົາຊັບສົມບັດຂອງພໍ່ແມ່ທັງໝົດຈຶ່ງສົມຮູ້ຮ່ວມຄິດກັນເຮັດພິໄນກຳປອມຂຶ້ນມາເພື່ອເອົາຊັບສົມບັດຂອງພໍ່ແມ່ທັງໝົດ ໂດຍບໍ່ໃຫ້ພໍ່ແມ່ຮູ້ຈັກນຳໃນກໍລະນີນີ້ຖືວ່າພິໄນກຳເປັນໂມຄະ. ກໍລະນີນີ້ ສິດໃນການເປັນຜູ້ສືບທອດຂອງ **ຄ** ແລະ **ຈ** ກໍຈະເສຍໄປ (ມາດຕາ 618 ວັກ1 ຂໍ້ 2ຂອງປະມວນກົດໝາຍແພ່ງ),ຖ້າ **ຄ** ແລະ **ຈ** ເປັນຜູ້ທີ່ມີສິດໃນການສືບທອດມູນມໍຣະດົກຂອງພໍ່ແມ່..

4: ພິໄນກຳທີ່ໄດ້ມອບຊັບໃຫ້ແກ່ບຸກຄົນ ຊຶ່ງໄດ້ກຳນົດໄວ້ໃນ ມາດຕາ 595 ຂອງປະມວນກົດໝາຍແພ່ງ
ກ ແລະ **ຂ** ມີລູກຮ່ວມກັນ 2 ຄົນຄື: **ຄ** ແລະ **ງ**, ມີສິນສົມສ້າງຄືທີ່ດິນພ້ອມເຮືອນຫ້ອງແຖວ 4 ຫ້ອງ 3 ຊັ້ນ 1 ຫຼັງແລະເງິນຝາກທະນາຄານຈຳນວນ 500.000.000 ກີບ. **ກ** ໃຫ້ຈນ້ອງຊາຍຂຽນພິໄນກຳໃຫ້ມີຂຜູ້ເປັນເມຍ, **ສ** ຜູ້ເປັນເອື້ອຍ ແລະ **ຊ** ຜູ້ເປັນຫຼານ (ລູກຊາຍ **ຈ**) ເປັນພະຍານໂດຍມີເນື້ອໃນຄື: ສິນສົມສ້າງທັງໝົດມາແບ່ງປັນເປັນ 2 ພູດສະເໝີກັນ, ໃຫ້ເມຍ 1 ພູດ ແລະ **ກ** 1 ພູດນັ້ນໃຫ້ແບ່ງຄື: ທີ່ດິນພ້ອມເຮືອນພູດຂອງກແມ່ນມອບໃຫ້ລູກທັງສອງຄື: **ຄ** ແລະ **ງ** ຜູ້ລະເຄິ່ງ, ສ່ວນເງິນຝາກທະນາຄານ ຈຳນວນ 250.000.000 ກີບ ທີ່ເປັນພູດຂອງກມອບໃຫ້ **ຈ** ຈຳນວນ 50.000.000 ກີບ, ມອບໃຫ້ **ຊ** ຜູ້ເປັນຫຼານ (ລູກຊາຍ**ຈ**) ຈຳນວນ 30.000.000 ກີບ, ມອບໃຫ້ສຜູ້ເປັນເອື້ອຍຂອງ **ກ** 50.000.000 ກີບ, ສ່ວນເຫຼືອຈຳນວນ 120.000.000 ກີບ ແມ່ນໃຫ້ຈົ່ງໄວ້ໃຫ້ກເອງເພື່ອເອົາໄວ້ນຳໃຊ້ເຮັດພິທີມ້ຽນຄາບສົ່ງສະການແລະເຮັດບຸນກົນທານພາຍຫຼັງກເສຍຊີວິດ, ຖ້າເຫຼືອຈົ່ງຈະແບ່ງປັນໃຫ້ພວກລູກ ຂອງກຜູ້ລະເຄິ່ງ. ກໍລະນີນີ້ພິໄນກຳເປັນໂມຄະ ເນື່ອງຈາກວ່າພິໄນກຳດັ່ງກ່າວ **ສ** (ພະຍານ), **ຊ** (ພະຍານ ແລະ ລູກຊາຍຜູ້ຂຽນພິໄນກຳທີ່ບໍ່ແມ່ນເຈົ້າມູນມໍຣະດົກ) ແລະ **ຈ** (ຜູ້ຂຽນພິໄນກຳ) ແມ່ນເປັນຜູ້ບໍ່ມີສິດຮັບພິໄນກຳຕາມມາດຕາ 595 ຂອງປະມວນກົດໝາຍແພ່ງ, ຜົນທາງດ້ານກົດໝາຍຂອງພິໄນກຳທີ່ເປັນໂມຄະແມ່ນ ຈະພາໃຫ້ເກີດມີການສືບທອດຕາມກົດໝາຍຕໍ່ຊັບທີ່ຢູ່ໃນພິໄນກຳທີ່ເປັນໂມຄະນັ້ນ.

ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 35 ຂອງກົດໝາຍວ່າດ້ວຍການສືບທອດມູນມໍຣະດົກປີ 2008 ພິໄນກຳເປັນໂມຄະໂດຍປັບປຸງຄຳສັບຈາກຄຳວ່າ:"ບຸກຄົນທີ່ບໍ່ທັນເຖິງກະສຽນອາຍຸສິບແປດປີ ຫຼື ເປັນບ້າເສຍຈິດ"ມາເປັນ"ບຸກຄົນບໍ່ມີຄວາມສາມາດທາງດ້ານການປະພຶດ"ເພື່ອໃຫ້ສອດຄ່ອງກັບ ມາດຕາ 67, 68 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 1703 ແລະ 1704 ຂອງປະມວນກົດໝາຍແພ່ງ ແລະ ພານິດໄທ; ມາດຕາ 960, 961, 963, 971 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 67, 68, 72, 76, 595 ແລະ 618 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນຫຼືປະເພນີສານ	ສືບຕໍ່ຄົ້ນຄວ້າ

ມາດຕາ603 ການແຕ່ງຕັ້ງຜູ້ປະຕິບັດພິໄນກຳ

ຜູ້ປະຕິບັດພິໄນກຳ ອາດຖືກແຕ່ງຕັ້ງໂດຍ:

1. ເຈົ້າຂອງຊັບ;
2. ບຸກຄົນຊຶ່ງໄດ້ກຳນົດໄວ້ໃນພິໄນກຳຫຼື ຜູ້ໃດໜຶ່ງທີ່ມີສິດສືບທອດມູນມໍຣະດົກ;
3. ສານປະຊາຊົນຕາມການຮ້ອງຂໍຂອງຜູ້ທີ່ມີສ່ວນກ່ຽວຂ້ອງກັບມູນມໍຣະດົກໃນກໍລະນີເຈົ້າຂອງຊັບ ຫາກບໍ່ໄດ້ກຳນົດຜູ້ປະຕິບັດພິໄນກຳໄວ້, ຜູ້ຖືກແຕ່ງຕັ້ງນັ້ນໄດ້ເສຍຊີວິດ, ເປັນຜູ້ຫາຍສາບສູນ, ບໍ່ມີຄວາມສາມາດທາງດ້ານການປະພຶດ, ບໍ່ຈົງໃຈປະຕິບັດຫຼືບໍ່ສາມາດປະຕິບັດໄດ້.

ຈຸດປະສົງ	ເພື່ອໃຫ້ຮູ້ກ່ຽວກັບ ຜູ້ແຕ່ງຕັ້ງຜູ້ປະຕິບັດພິໄນກຳ ແລະ ຜູ້ທີ່ມີສິດຮ້ອງຂໍໃຫ້ແຕ່ງຕັ້ງຜູ້ປະຕິບັດພິໄນກຳ.
ຕົວຢ່າງ	**ກ** ມີເງິນຈຳນວນ 300.000.000 ກີບ, **ກ** ເຮັດພິໄນກຳມອບເງິນດັ່ງກ່າວໃຫ້ **ຂ** ຜູ້ເປັນເມຍຈຳນວນ 80.000.000 ກີບ ແລະ ໃຫ້ລູກ 2 ຄົນຜູ້ລະຈຳນວນ 90.000.000 ກີບ, ສ່ວນເຫຼືອຈຳນວນ 40.000.000 ກີບ ແມ່ນຍົກໄວ້ໃຫ້ຕົນເອງເພື່ອເອົາໄວ້ເງິນນຳໃຊ້ເຂົ້າໃນການມ້ຽນຄາບສົ່ງສະການ ຕົນເອງພາຍຫຼັງທີ່ເສຍຊີວິດ. **ກໍລະນີ1. ກ** ແຕ່ງຕັ້ງພະນັກງານທະບຽນສານເປັນຜູ້ປະຕິບັດພິໄນກຳ ກໍຖືວ່າໃຫ້ງເປັນຜູ້ນຳພາຈັດຕັ້ງປະຕິບັດພິໄນກຳດັ່ງກ່າວຕາມມາດຕາ 604 ຂອງປະມວນກົດໝາຍແພ່ງ. **ກໍລະນີ2. ກ** ບໍ່ໄດ້ແຕ່ງຕັ້ງບຸກຄົນໃດເປັນຜູ້ປະຕິບັດພິໄນກຳ. ໃນກໍລະນີນີ້ເມຍແລະພວກລູກໄດ້ເຫັນດີເປັນເອກະພາບກັນແຕ່ງຕັ້ງນາຍບ້ານບ່ອນທີ່ພວກກ່ຽວອາໃສຢູ່ເປັນຜູ້ປະຕິບັດພິໄນກຳນັ້ນກໍໃຫ້ຖືເອົາຕາມການແຕ່ງຕັ້ງດັ່ງກ່າວ. **ກໍລະນີ3. ກ** ບໍ່ໄດ້ແຕ່ຕັ້ງບຸກຄົນໃດເປັນຜູ້ປະຕິບັດພິໄນກຳ. **ຂ** ສະເໜີແຕ່ງຕັ້ງນາຍບ້ານບ່ອນທີ່ພວກກ່ຽວອາໃສຢູ່ເປັນຜູ້ປະຕິບັດພິໄນກຳ, ແຕ່ພວກລູກບໍ່ເຫັນດີນຳ**ຂ**ຜູ້ເປັນແມ່ ແລະ ສະເໜີແຕ່ງຕັ້ງສທະນາຍຄວາມເປັນຜູ້ປະຕິບັດ, ກໍລະນີດັ່ງກ່າວນີ້ແມ່ນ **ຂ** ຫຼື ພວກລູກມີສິດຮ້ອງຂໍຕໍ່ສານເພື່ອໃຫ້ສານແຕ່ງຕັ້ງຜູ້ປະຕິບັດພິໄນກຳ. **ກໍລະນີ 4.** ວັນທີ 12 ເມສາ 2021 ກໄດ້ແຕ່ງຕັ້ງງຜູ້ປະຕິບັດພິໄນກຳ. ຕົກມາຮອດວັນທີ 01 ພຶດສະພາ 2021,ກເສຍຊີວິດ, ວັນທີ 05 ພຶດສະພາ 2021 **ງ** ເກີດອຸບປະຕິເຫດແພດໄດ້ຢັ້ງຢືນວ່າ **ງ** ສູນເສຍຄວາມສາມາດທາງດ້ານການປະພຶດ (ເປັນບ້າ) ຊຶ່ງບໍ່ສາມາດປະຕິບັດພິໄນກຳໄດ້, ກໍລະນີດັ່ງກ່າວນີ້ແມ່ນ **ຂ** ຫຼື ພວກລູກມີສິດຮ້ອງຂໍຕໍ່ສານເພື່ອໃຫ້ສານແຕ່ງຕັ້ງຜູ້ປະຕິບັດພິໄນກຳ. **ກໍລະນີ 5. ກ** ແຕ່ງຕັ້ງງຜູ້ປະຕິບັດພິໄນກຳ. ແຕ່ **ງ** ໄດ້ຖືກແຕ່ງຕັ້ງໄປປະຈຳການຢູ່ຕ່າງປະເທດຢ່າງກະທັນຫັນ ບໍ່ສາມາດປະຕິບັດພິໄນກຳໄດ້ກໍລະນີນີ້ແມ່ນ **ຂ** ຫຼື ພວກລູກມີສິດຮ້ອງຂໍຕໍ່ສານເພື່ອໃຫ້ສານແຕ່ງຕັ້ງຜູ້ປະຕິບັດພິໄນກຳ.

ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງຈາກມາດຕາ 36 ຂອງກົດໝາຍວ່າດ້ວຍການສືບທອດມູນມໍຣະດົກປີ 2008ການແຕ່ງຕັ້ງຜູ້ປະຕິບັດພິໄນກຳບໍ່ໄດ້ກຳນົດ ຜູ້ໃດທີ່ຈະເປັນຜູ້ຮ້ອງຂໍຕໍ່ສານເພື່ອພິຈາລະນາໃນປະມວນກົດໝາຍແພ່ງມາດຕານີ້ໃນ ຂໍ້ທີ 3 ກ່ຽວກັບການພິຈາລະນາແຕ່ງຕັ້ງຜູ້ປະຕິບັດພິໄນກຳຂອງສານປະຊາຊົນ ແມ່ນບົນພື້ນຖານທີ່ມີການຮ້ອງຂໍຂອງຜູ້ທີ່ມີສ່ວນກ່ຽວຂ້ອງກັບມູນມໍຣະດົກ ຈຶ່ງເພີ່ມປະໂຫຍກຄຳວ່າ: "ຕາມການຮ້ອງຂໍຂອງຜູ້ທີ່ມີສ່ວນກ່ຽວຂ້ອງກັບມູນມໍຣະດົກ" ເພື່ອໃຫ້ມີຄວາມຊັດເຈນຂຶ້ນ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 1006, 1010 ແລະ 1019 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ; ມາດຕາ 1712 ຂອງປະມວນກົດໝາຍແພ່ງ ແລະ ພານິດ ໄທ.
ມາດຕາອ້າງອີງ	ມາດຕາ 626 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ604 ສິດ ແລະ ພັນທະຂອງຜູ້ປະຕິບັດພິໄນກຳ

ພິໄນກຳຈະນຳມາປະຕິບັດໄດ້ກໍຕໍ່ເມື່ອເຈົ້າຂອງຊັບ ຫາກໄດ້ເສຍຊີວິດໄປແລ້ວ.

ຜູ້ປະຕິບັດພິໄນກຳ ມີສິດເຮັດສິ່ງທີ່ຈຳເປັນແລະເໝາະສົມ ເພື່ອປະຕິບັດພິໄນກຳໃຫ້ປາກົດຜົນເປັ້ຈິງ.

ຜູ້ປະຕິບັດພິໄນກຳ ຈະບໍ່ໄດ້ຮັບບຳເນັດໃນການປະຕິບັດພິໄນກຳນັ້ນແຕ່ຫາກມີສິດໄດ້ຮັບຄ່າທົດແທນການໃຊ້ຈ່າຍອັນຈຳເປັນໃນການປົກປັກຮັກສາແລະຄຸ້ມຄອງມູນມໍຣະດົກນັ້ນ.

ຜູ້ປະຕິບັດພິໄນກຳ ມີພັນທະລາຍງານກ່ຽວກັບການຈັດຕັ້ງປະຕິບັດພິໄນກຳດັ່ງກ່າວ ໃຫ້ຜູ້ສືບທອດມູນມໍຣະດົກຊາບ.

ຈຸດປະສົງ	ເພື່ອກຳນົດກ່ຽວກັບເວລາການປະຕິບັດພິໄນກຳໄດ້, ສິດອຳນາດຂອງຜູ້ປະຕິບັດພິໄນກຳ, ສິດ ແລະ ພັນທະຂອງຜູ້ປະຕິບັດພິໄນກຳ (ຈະບໍ່ໄດ້ຮັບບຳເນັດ ແຕ່ມີສິດຮ້ອງຂໍເອົາຄ່າໃຊ້ຈ່າຍໄດ້, ມີພັນທະລາຍງານ).
ຕົວຢ່າງ	**ກ** ມີເງິນຈຳນວນ 300.000.000 ກີບເຮັດພິໄນກຳມອບເງິນຈຳນວນດັ່ງກ່າວ ໃຫ້ **ຂ** ຜູ້ເປັນເມຍຈຳນວນ 80.000.000 ກີບ ແລະ ໃຫ້ລູກ 2 ຄົນຜູ້ລະຈຳນວນ 90.000.000 ກີບ, ສ່ວນເຫຼືອ ຈຳນວນ 40.000.000 ກີບ ແມ່ນຍົກໄວ້ ເພື່ອເອົາໄວ້ເງິນນຳໃຊ້ເຂົ້າງານມ້ຽນຄາບສົ່ງສະການຕົນເອງເວລາເສຍຊີວິດ, **ກ** ໄດ້ແຕ່ງຕັ້ງ **ງ** ເປັນຜູ້ປະຕິບັດພິໄນກຳ, ພາຍຫຼັງ **ກ** ເສຍຊີວິດ **ງ** ເຮັດສິ່ງທີ່ຈຳເປັນ ແລະ ເໝາະສົມໃນການປະຕິບັດພິໄນກຳເຊັ່ນ: ແຈ້ງທະນາຄານທີ່ກ່ຽວຂ້ອງເພື່ອບໍ່ໃຫ້ຜູ້ສືບທອດຜູ້ໃດຜູ້ໜຶ່ງຂອງ **ກ** ຖອນເງິນກ່ອນການປະຕິບັດພິໄນກຳ, ກຳນົດຜູ້ເຂົ້າຮ່ວມ, ວັນເວລາ ແລະ ສະຖານທີ່ໃນການປະຕິບັດພິໄນກຳ, ຖ້າມີການໃຊ້ຈ່າຍອັນຈຳເປັນໃນການປົກປັກຮັກສາ ແລະ ຄຸ້ມຄອງມູນມໍຣະດົກຂອງ **ກ** ເຊັ່ນ: ການໃຊ້ຈ່າຍສົ່ງແຈ້ງການໃຫ້ທະນາຄານ, ເຊີນການຈັດຕັ້ງ ແລະ ບຸກຄົນທີ່ກ່ຽວຂ້ອງເຂົ້າຮ່ວມໃນການປະຕິບັດພິໄນກຳເຫຼົ່ານີ້ເປັນຕົ້ນ, **ງ** ກໍມີສິດໄດ້ຮັບຄ່າຕອບແທນດັ່ງກ່າວ **ງ** ຕ້ອງລາຍງານກ່ຽວກັບການປະຕິບັດພິໄນກຳດັ່ງກ່າວ ໃຫ້ **ຂ** ແລະ ລູກທັງ 2 ຄົນຂອງ **ກ** ທີ່ເປັນຜູ້ສືບທອດມູນມໍຣະດົກຊາບ.
ເຫດຜົນໃນການຮັກສາເດີມ	ມາດຕານີ້ຮັກສາເດີມ ມາດຕາ 37 ຂອງກົດໝາຍວ່າດ້ວຍການສືບທອດມູນມໍຣະດົກ ປີ 2008.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ1012 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 603, 620, 622 ແລະ ມາດຕາອື່ນໆ ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນຫຼືປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ605ການເປີດພິໄນກຳ

ພາຍຫຼັງເຈົ້າມູນມໍຣະດົກເສຍຊີວິດແລ້ວ ພາຍໃນເວລາ ສິບຫ້າວັນ ນາຍບ້ານ ຫຼື ນາຍທະບຽນສານ ທີ່ຮັກສາພິໄນກຳຕ້ອງນຳເອົາພິໄນກຳ ມາເປີດຊ້ອງໜ້າ ຜູ້ມີສິດສືບທອດມູນມໍຣະດົກ.

ຈຸດປະສົງ	ເພື່ອໃຫ້ຮູ້ກ່ຽວກັບການກະທຳທີ່ຄວນປະຕິບັດຂອງອົງການຈັດຕັ້ງທີ່ຮັກສາພິໄນກຳ ໃນກໍລະນີທີ່ເຈົ້າມູນມໍຣະດົກເສຍຊີວິດ.
ຕົວຢ່າງ	ວັນທີ01ມັງກອນ2021**ກ**ເຮັດພິໄນກຳເກັບໄວ້ນຳຫ້ອງການທະບຽນສານບ່ອນທີ່ຕົນອາໃສຢູ່. ຮອດວັນທີ 1 ມີຖຸນາ 2021 **ກ** ເສຍຊີວິດ, ການເປີດພິໄນກຳ ແມ່ນຕ້ອງໄດ້ດຳເນີນຢ່າງຮີບດ່ວນ ພາຍໃນກຳນົດເວລາ ສິບຫ້າ ວັນ ນາຍທະບຽນ ສານອາດຈະກຳນົດເອົາວັນໃດໜຶ່ງພາຍຫຼັງພິທີການມ້ຽນຄາບສົ່ງສະການ **ກ** ສຳ ເລັດແລ້ວ ອາດຈະແມ່ນ ວັນທີ 9 ຫຼື ວັນທີ 10 ມີຖຸນາ 2021ກໍໄດ້, ແຕ່ບໍ່ ໃຫ້ກາຍ ວັນທີ 15 ມີຖຸນາ2021 ນາຍທະບຽນສານຕ້ອງນຳເອົາພິໄນກຳຂອງ **ກ** ມາເປີດເຜີຍຊ້ອງໜ້າໃຫ້ບັນດາຜູ້ມີສິດສືບທອດມູນມໍຣະດົກຂອງ **ກ** ທັງໝົດ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ສ້າງຂຶ້ນໃໝ່ ຍ້ອນວ່າ ກົດໝາຍວ່າດ້ວຍການສືບທອດມູນມໍຣະດົກ ປີ 2008 ບໍ່ທັນມີມາດຕາໃດທີ່ໄດ້ລະບຸແຈ້ງກ່ຽວກັບກຳນົດເວລາຂອງການເປີດພິ ໄນກຳພາຍຫຼັງທີ່ເຈົ້າມູນເສຍຊີວິດແລ້ວ. ມາດຕາຈຶ່ງມີການກຳນົດໃຫ້ຊັດເຈນ ກ່ຽວກັບເວລາໃນການນຳເອົາພິໄນກຳມາເປີດເຜີຍຊ້ອງໜ້າໃຫ້ຜູ້ສືບທອດໄດ້ ຮັບຮູ້ທັງນີ້ກໍເພື່ອເປັນເງື່ອນໄຂສະດວກໃນການເຮັດວຽກຂອງນາຍບ້ານ ຫຼື ນາຍ ທະບຽນສານເອງ.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງຂອງປະເທດອື່ນ	ມາດຕາ 1004 ແລະ 1005 (ພິສູດພິໄນກຳ) ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 590 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ໝວດທີ 4
ການຮັບ, ການສະລະ ແລະ ການເສຍສິດສືບທອດມູນມໍຣະດົກ

ກ. ການຮັບ ແລະ ການສະລະມູນມໍຣະດົກ

ມາດຕາ606 ການສະເໜີເປີດການສືບທອດມູນມໍຣະດົກ

ຜູ້ມີສິດສືບທອດມູນມໍຣະດົກຜູ້ໃດໜຶ່ງ ມີສິດສະເໜີເປີດການສືບທອດມູນມໍຣະດົກເວລາໃດກໍໄດ້ ນັບແຕ່ເວລາເຈົ້າມູນມໍຣະດົກເສຍຊີວິດເປັນຕົ້ນໄປ, ເວັ້ນເສຍແຕ່ມີການກຳນົດໄວ້ໃນພິໄນກຳ ຫຼື ມີການຕົກ ລົງກັນໄວ້ເປັນຢ່າງອື່ນ.

ຖ້າມີຜູ້ມີສິດສືບທອດມູນມໍຣະດົກຜູ້ໃດໜຶ່ງ ທີ່ຍັງບໍ່ທັນພົ້ນກະສຽນອາຍຸ, ການເປີດການສືບທອດ ມູນມໍຣະດົກ ຈະຍືດເວລາອອກໄປຈົນກວ່າຜູ້ກ່ຽວຈະພົ້ນກະສຽນອາຍຸກໍໄດ້. ໃນກໍລະນີທີ່ມີການເປີດການ ສືບທອດມູນມໍຣະດົກໃນເວລານັ້ນ ກໍຕ້ອງໃຫ້ນາຍທະບຽນສານ ຫຼື ນາຍບ້ານເປັນຜູ້ເຂົ້າຮ່ວມຢັ້ງຢືນ.

ໃນກໍລະນີໃດກໍຕາມ ຖ້າຜົວ ຫຼື ເມຍ ຫາກເສຍຊີວິດ ແລະ ຜູ້ມີຊີວິດຢູ່ນັ້ນ ຫາກໄດ້ເອົາເມຍ ຫຼື ຜົວໃໝ່, ພວກລູກກໍມີສິດສະເໜີເປີດການສືບທອດມູນມໍຣະດົກໄດ້.

ຈຸດປະສົງ	ເພື່ອໃຫ້ຮູ້ກ່ຽວກັບສິດໃນການສະເໜີໃຫ້ມີການເປີດການສືບທອດມູນມໍຣະ ດົກ ແລະ ເງື່ອນໄຂຂອງຜູ້ສືບທອດທີ່ຍັງບໍ່ທັນເຖິງກະສຽນອາຍຸໃນເວລາສະເໜີ ເປີດການສືບທອດມູນມໍຣະດົກ.

ຕົວຢ່າງ	**1. ກ** ແລະ **ຂ** ມີລູກ 2 ຄົນຄື: **ຄ** ອາຍຸ 20 ປີ ແລະ **ງ** ອາຍຸ 15 ປີ, ມີສິນສົມສ້າງມູນຄ່າຈຳນວນ 300.000.000 ກີບ. ເດືອນ ກຸມພາ 2019 **ກ** ໄດ້ເສຍຊີວິດ, ຕົກມາ ເດືອນ ທັນວາ 2021**ຂ** ຈະແຕ່ງດອງໃໝ່ກັບ **ຈ**, ດັ່ງນັ້ນ **ຄ** ຈຶ່ງສະເໜີໃຫ້ມີການເປີດການສືບທອດມູນມໍຣະດົກທີ່ເປັນຂອງ **ກ**, ຕໍ່ມາ **ຂ**, **ຄ** ແລະ **ງ** ມາເຕົ້າໂຮມກັນເພື່ອຕົກລົງ ເຮັດເປັນຊີມູນມໍຣະດົກຂອງ **ກ** ທີ່ມີຕົວຈິງແລ້ວນຳມາແບ່ງປັນກັນ, ແຕ່ວ່າອາຍຸຂອງ **ງ** ໃນມື້ທີ່ເປີດການສືບທອດມູນມໍຣະດົກນັ້ນ ຍັງບໍ່ທັນພົ້ນກະສຽນຈຶ່ງໄດ້ຢືດເວລາອອກໄປຕາມການເຫັນດີຂອງຜູ້ມີສິດສືບທອດໃຫ້ມີການເປີດການສືບທອດມູນມໍຣະດົກກັນໃໝ່ອີກຄັ້ງໃນປີ 2022 ເວລາທີ່ **ງ** ພົ້ນກະສຽນອາຍຸ. ກໍລະນີດັ່ງກ່າວນີ້ແມ່ນແບ່ງປັນຕາມມາດຕາ 577 ແລະ 578 ຂອງປະມວນກົດໝາຍແພ່ງ. **2:**ຕົວຢ່າງຄືຂ້າງເທິງ ກໍລະນີທີ່ **ຂ** (ໃນຖານະຜູ້ມີສິດສືບທອດມູນມໍຣະດົກຂອງ **ກ** ແລະ ເປັນແມ່ຂອງ **ງ**) ແລະ **ຄ** ຕົກລົງເຫັນດີແບ່ງປັນມູນມໍຣະດົກກັນເຖິງວ່າ **ງ** ຈະບໍ່ທັນພົ້ນກະສຽນກໍຕາມ ການເປີດການສືບທອດມູນມໍຣະດົກນັ້ນ ຕ້ອງໄດ້ມີການເຂົ້າຮ່ວມຂອງນາຍບ້ານ ຫຼື ນາຍທະບຽນສານ ໃນມື້ທີ່ມີການເປີດການສືບທອດພ້ອມທັງມີການແຕ່ງຕັ້ງຜູ້ຄຸ້ມຄອງມູນມໍຣະດົກທີ່ເປັນພູດຂອງ **ງ** ໄວ້ ຈົນກວ່າຜູ້ກ່ຽວຈະພົ້ນກະສຽນໃນນີ້ອາດຈະແມ່ນ **ຂ** ຜູ້ເປັນແມ່ເປັນຜູ້ຄຸ້ມຄອງໄວ້ໃຫ້ ຫຼື ອາດຈະແຕ່ງຕັ້ງຜູ້ຄຸ້ມຄອງອື່ນຕາມມາດຕາ 620 ຂອງປະມວນກົດໝາຍແພ່ງ. ມາດຕານີ້ປັບປຸງມາດຈາກມາດຕາ 38 ຂອງກົດໝາຍວ່າດ້ວຍການສືບທອດມູນມໍຣະດົກ ປີ 2008 ບໍ່ໄດ້ກຳນົດກ່ຽວກັບເວລາໃນການເປີດການສືບທອດມູນມໍຣະດົກໄວ້ ປະມວນກົດໝາຍແພ່ງ ຈຶ່ງເພີ່ມເງື່ອນໄຂດ້ານເວລາໃນການສະເໜີເປີດການສືບທອດມູນມໍຣະດົກໂດຍເພີ່ມປະໂຫຍຄຳວ່າ: "ນັບແຕ່ ເຈົ້າມູນມໍຣະດົກເສຍຊີວິດເປັນຕົ້ນໄປ " ໃນວັກ 1 ຂອງມາດຕານີ້ ແລະ ໃນວັກ 2 ແລະ 3 ປັບປຸງຄຳວ່າ: "ການແບ່ງປັນມູນມໍຣະດົກ"ມາເປັນ "ການເປີດການສືບທອດມູນມໍຣະດົກ", ຄຳວ່າ "ຈະເຖິງອາຍຸກະສຽນ ສິບແປດປີ" ມາເປັນ "ພົ້ນກະສຽນອາຍຸ" ເພື່ອໃຫ້ສອດຄ່ອງກັບຄຳສັບທີ່ໃຊ້ຢູ່ໃນປະມວນກົດໝາຍແພ່ງ ແລະ ຄຳວ່າ "ພະນັກງານທະບຽນສານ" ມາເປັນ "ນາຍທະບຽນສານ" ເພື່ອໃຫ້ສອດຄ່ອງກັບກົດໝາຍວ່າດ້ວຍທະບຽນສານ ແລະ ການປັບປຸງອີກຢ່າງໜຶ່ງກໍເພື່ອໃຫ້ເຫັນຢ່າງແຈ້ງກ່ຽວກັບມື້ສະເໜີເປີດການສືບທອດມູນມໍຣະດົກ ຂອງຜູ້ທີ່ມີສິດໃນການສືບທອດມູນມໍຣະດົກຂອງຜູ້ເສຍຊີວິດນັ້ນ. ທັງນີ້ກໍຍ້ອນວ່າກົດໝາຍວ່າດ້ວຍການສືບທອດມູນມໍຣະດົກ ປີ 2008 ແມ່ນຍັງບໍ່ທັນໄດ້ກຳນົດແຈ້ງກ່ຽວກັບມື້ທີ່ສະເໜີເປີດການສືບທອດມູນມໍຣະດົກຂອງຜູ້ທີ່ມີສິດສືບທອດ ກັບ ມື້ທີ່ເລີ່ມມີສິດໃນການສືບທອດມູນມໍຣະດົກ. **ແຜນອາດການສືບທອດມູນມໍຣະດົກ** ສິດຂອງຜູ້ມີສິດສືບທອດມູນມໍຣະດົກແມ່ນເລີ່ມເກີດຂຶ້ນຕາມມາດຕາ568ຂອງປະມວນກົດໝາຍແພ່ງ. ມູນມໍຣະດົກທີ່ຈະນຳມາແບ່ງປັນນັ້ນຕ້ອງເຫຼືອຈາກການຫັກຄ່າໃຊ້ຈ່າຍຕ່າງໆທີ່ເປັນ ຫຼື ກ່ຽວຂ້ອງກັບເຈົ້າມູນແລ້ວຕາມມາດຕາ 570ຂອງປະມວນກົດໝາຍແພ່ງ. ຜູ້ມີສິດສືບທອດທີ່ຕ້ອງການແບ່ງປັນມູນມໍຣະດົກ ແມ່ນສາມາດສະເໜີເປີດການສືບທອດມູນມໍຣະດົກ ຕາມມາດຕາ 606 ຂອງປະມວນກົດໝາຍແພ່ງ. ຜູ້ທີ່ຄຸ້ມຄອງມູນມໍຣະດົກຕ້ອງໄດ້ເຮັດບັນຊີມູນມໍຣະດົກ ຕາມມາດຕາ 607 ຂໍ້ 1 ແລະ 2 ພ້ອມທັງໄດ້ມີການຊຳລະສະສາງ ຕາມມາດຕາ 607 ຂໍ້ 3 ຂອງປະມວນກົດໝາຍແພ່ງ ໃຫ້ສຳເລັດ.

ເຫດຜົນໃນການປັບປຸງ	ຜູ້ມີສິດສືບທອດມູນ ສະແດງເຈດຈຳນົງ ໃນການຮັບ ຫຼື ສະລະມູນມໍຣະດົກ ຕາມມາດຕາ 610 ແລະ 612 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 906, 907 ແລະ 908 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 568 ແລະ 623 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 607 ການເຮັດບັນຊີມູນມໍຣະດົກ

ກ່ອນການແບ່ງປັນມູນມໍຣະດົກຕ້ອງເຮັດບັນຊີຊັບສົມບັດຕ່າງໆຂອງເຈົ້າມູນມໍຣະດົກດັ່ງນີ້:

1. ຊັບສົມບັດທີ່ເປັນຊັບເດີມ ຫຼື ສິນສົມສ້າງ;
2. ຊັບສົມບັດຊຶ່ງເຈົ້າມູນມໍຣະດົກໄດ້ເອົາໃຫ້ຜູ້ອື່ນຢືມ, ກູ້ຢືມ ຫຼື ເອົາໄປຝາກ ຫຼື ຄ້ຳປະກັນ, ຖືກຜູ້ອື່ນສໍ້ໂກງ, ປິດບັງ, ຍັກຍອກເອົາກ່ອນການເສຍຊີວິດ;
3. ການໃຊ້ຈ່າຍຄ່າມ້ຽນຄາບສົ່ງສະການ ແລະ ໜີ້ສິນຂອງເຈົ້າມູນມໍຣະດົກ.

ພາຍຫຼັງທີ່ໄດ້ສະສາງບັນຊີລາຍຮັບ-ລາຍຈ່າຍສຳເລັດແລ້ວ ຜູ້ສືບທອດມູນມໍຣະດົກຈຶ່ງແບ່ງປັນຊັບດັ່ງກ່າວຕາມພູດຂອງໃຜລາວ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ກ່ອນການແບ່ງປັນມູນມໍຣະດົກ ① ຕ້ອງສ້າງບັນຊີຊັບສົມບັດ ເພື່ອໃຫ້ຈະແจ້ງກ່ຽວກັບເນື້ອໃນຂອງຊັບ ແລະ ② ໃນເວລາທີ່ເຈົ້າມູນຍັງມີຊີວິດຢູ່ ຈຳເປັນຕ້ອງໄດ້ໄລ່ລຽງການກະທຳທີ່ກ່ຽວກັບຊັບສົມບັດໃຫ້ສຳເລັດ.
ຕົວຢ່າງ	**ກ** ແລະ **ຂ** ມີລູກ 2 ຄົນຄື: **ຄ** ແລະ **ງ** ມີສິນສົມສ້າງ ທີ່ດິນ ແລະ ເຮືອນ ໜຶ່ງຕອນ ມູນຄ່າຈຳນວນ 300.000.000 ກີບ, ລົດ 1 ຄັນ ມູນຄ່າຈຳນວນ 150.000.000 ກີບ, ລົດຈັກ 1 ຄັນ ມູນຄ່າຈຳນວນ 10.000.000 ກີບ ແລະ ເງິນຝາກໃນທະນາຄານຈຳນວນ 100.000.000 ກີບ. **ກ** ມີຊັບເດີມ ທີ່ດິນນາໜຶ່ງຕອນ ມູນຄ່າຈຳນວນ 50.000.000 ກີບ, **ກ** ແລະ **ຂ** ມີໜີ້ຕ້ອງສົ່ງ **ຈ** ຈຳນວນ 20.000.000 ກີບ, ຕໍ່ມາ **ກ** ໄດ້ເສຍຊີວິດຈາກອຸປະຕິເຫດ ພາຍຫຼັງມ້ຽນຄາບສົ່ງສະການແລ້ວ,**ຂ**ຜູ້ເປັນເມຍ ແລະ ພວກລູກແບ່ງປັນມູນມໍຣະດົກຂອງ **ກ** ແລະ **ຂ** ຜູ້ຄຸ້ມຄອງມູນມໍຣະດົກໄດ້ເຮັດບັນຊີຊັບສິນ ແລະ ໜີ້ສິນຂອງ **ກ** ໂດຍກຳນົດ ຊັບເດີມ ແລະ ສິນສົມສ້າງຂອງ **ກ,** ໜີ້ຕ້ອງສົ່ງໃຫ້ **ຈ** ຈຳນວນ 20.000.000 ກີບ ແລະ ເງິນທີ່ມ້ຽນຄາບສົ່ງສະການຂອງ **ກ**, ຫຼັງຈາກທີ່ໄດ້ຊຳລະຄ່າມ້ຽນຄາບສົ່ງສະການ ແລະ ໃຊ້ໜີ້ສິນຂອງກໃຫ້ແກ່ **ຈ** ແລ້ວ, **ຂ** ແລະ ພວກລູກຈຶ່ງເອົາມູນມໍຣະດົກທີ່ຍັງເຫຼືອນັ້ນມາແບ່ງປັນກັນ ຕາມມາດຕາ 576 ແລະ 577 ຂອງປະມວນກົດໝາຍແພ່ງ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 39 ຂອງກົດໝາຍວ່າດ້ວຍການສືບທອດມູນມໍຣະດົກ ປີ 2008 ບໍ່ໄດ້ກຳນົດວ່າຊັບສົມບັດຂອງເຈົ້າມູນມໍຣະດົກນັ້ນແມ່ນມີ ຊັບສົມບັດ ທີ່ເປັນຊັບເດີມ ຫຼື ສິນສົມສ້າງໄວ້ ປະມວນກົດໝາຍແພ່ງຈຶ່ງເພີ່ມ ເຕີມເນື້ອໃນ ຄຳວ່າ "ຊັບສົມບັດ ທີ່ເປັນຊັບເດີມ ຫຼື ສິນສົມສ້າງ"ເປັນຂໍ້ໜຶ່ງ ຂອງ ມາດຕານີ້ ເພື່ອໃຫ້ມີຄວາມຄົບຖ້ວນ ແລະ ແจ້ງຕື່ມ. ມາດຕານີ້ ບໍ່ໄດ້ກຳນົດເຈາະຈົງວ່າ ຕ້ອງແມ່ນບຸກຄົນໃດເປັນຜູ້ເຮັດບັນຊີ ເຂົ້າໃຈ ໄດ້ວ່າ ອາດຈະແມ່ນຜູ້ໃດໜຶ່ງໃນບັນດາຜູ້ມີສິດສືບທອດມູນມໍຣະດົກ ເຊັ່ນ: ພີ່ນ້ອ ຫຼື ເມຍທີ່ຍັງມີຊີວິດຢູ່ ຫຼື ລູກ, ແຕ່ບັນດາຜູ້ມີສິດສືບທອດມູນມໍຣະດົກຕ້ອງ ເອກະພາບກັນກ່ຽວກັບ ຊັບສົມບັດຕ່າງໆຂອງຜູ້ເສຍຊີວິດ ລວມທັງໜີ້ຕ້ອງຮັບ ແລະ ໜີ້ຕ້ອງສົ່ງ. ໃນກໍລະນີ ທີ່ມີການຮ້ອງຂໍ ໃຫ້ມີການຄຸ້ມຄອງມູນມໍຣະດົກ ຕາມມາດຕາ 620 ຂອງປະມວນກົດໝາຍແພ່ງ ຜູ້ຄຸ້ມຄອງມູນມໍຣະດົກ ຕາມມາດຕາ 622 ຂອງ ປະມວນກົດໝາຍແພ່ງຈະເປັນຜູ້ເຮັດບັນຊີດັ່ງກ່າວ.

	ການເຮັດບັນຊີຈະເຮັດເວລາໃດກໍໄດ້ ກ່ອນການແບ່ງປັນມູນມໍຣະດົກ ຕາມການຕົກລົງກັນລະຫວ່າງ ບັນດາຜູ້ມີສິດສືບທອດມູນມໍຣະດົກ ແລະ ບັນຊີນີ້ ຜູ້ມີສິດສືບທອດມູນມໍຣະດົກຜູ້ໃດໜຶ່ງຈະເກັບຮັກສາໄວ້ກໍໄດ້ ຕາມການຕົກລົງກັນ ຫຼື ເກັບຮັກສາໄວ້ຢູ່ຫ້ອງການບ້ານ ຫຼື ທະບຽນສານ. ໃນກໍລະນີທີ່ ບັນຊີມູນມໍຣະດົກ ເຮັດຂຶ້ນໂດຍຜູ້ຄຸ້ມຄອງມູນມໍຣະດົກ ບັນຊີນີ້ ຜູ້ຄຸ້ມຄອງມູນມໍຣະດົກເປັນຜູ້ເກັບຮັກສາ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 924 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 577, 578. 620 ແລະ 626 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 608 ອາຍຸຄວາມໃນການທວງເອົາມູນມໍຣະດົກ

ການທວງເອົາມູນມໍຣະດົກສາມາດເຮັດຂຶ້ນໄດ້ພາຍໃນເວລາສາມປີນັບແຕ່ວັນເວລາເຈົ້າມູນມໍຣະດົກ ໄດ້ເສຍຊີວິດເປັນຕົ້ນໄປ. ຖ້າຫາກກາຍກຳນົດເວລາດັ່ງກ່າວສິດໃນການທວງຈະຕົກໄປ, ເວັ້ນເສຍແຕ່ໃນກໍລະນີຜູ້ມີສິດສືບທອດມູນມໍຣະດົກນັ້ນຫາກມີອາຍຸບໍ່ເຖິງສິບແປດປີພາຍຫຼັງເຈົ້າມູນມໍຣະດົກໄດ້ເສຍຊີວິດ ຫຼື ມີເຫດຜົນອື່ນພຽງພໍ.

ຈຸດປະສົງ	ເພື່ອໃຫ້ຮູ້ກ່ຽວກັບ ການທວງເອົາມູນມໍຣະດົກ ແລະ ສິດໃນການທວງຈະຕົກໄປ.
ຕົວຢ່າງ	**1. ກ** ມີລູກ 2 ຄົນຄື: **ຂ** ອາຍຸ 25 ປີ ແລະ **ຄ** ອາຍຸ 22 ປີ, ກ່ອນທີ່ **ກ** ຈະເສຍຊີວິດໄດ້ມອບລົດໃຫ້ແກ່ **ຄ**, ສ່ວນທີ່ດິນ ແລະ ເຮືອນ ພ້ອມດ້ວຍລົດຈັກແມ່ນ **ຂ** ເປັນຜູ້ຄຸ້ມຄອງ ແລະ ນຳໃຊ້ ເນື່ອງຈາກວ່າ **ຂ** ເປັນຜູ້ເບິ່ງແຍງລ້ຽງດູ **ກ**. ເດືອນ ກໍລະກົດ 2019 **ກ** ເສຍຊີວິດ ພວກລູກພ້ອມກັນມ້ຽນຄາບສົ່ງສະການຈົນສຳເລັດ. ມາຮອດເດືອນ ມັງກອນ 2022 **ຄ** ໄດ້ມາທວງເພື່ອແບ່ງປັນທີ່ດິນ ແລະ ເຮືອນ ທີ່ເປັນມູນມໍຣະດົກຂອງ ກຈາກ **ຂ,** ສ່ວນລົດຈັກນັ້ນແມ່ນບໍ່ຂໍທວງໃຫ້ແບ່ງປັນແຕ່ຢ່າງໃດ. ກໍລະນີນີ້ການທວງຂອງ **ຄ** ຖືກຕ້ອງສອດຄ່ອງ ຕາມມາດຕານີ້ ເພາະທວງໃນກຳນົດເວລາ 3 ປີພາຍຫຼັງ **ກ** (ເຈົ້າມູນມໍຣະດົກ) ເສຍຊີວິດ ແລະ ການທວງຂອງ **ຄ** ແມ່ນພາໃຫ້ອາຍຸຄວາມມີການຢຸດສະຫງັກ ແລະ ເລີ່ມຕົ້ນນັບອາຍຸຄວາມໃໝ່ຕາມທີ່ຂຽນໄວ້ໃນມາດຕາ 62 ວັກ 5 ຂອງປະມວນກົດໝາຍແພ່ງ. ຖ້າຫາກວ່າ ໃນເດືອນ ສິງຫາ 2022 **ຄ** ທວງເອົາທີ່ດິນ ແລະ ເຮືອນນັ້ນ ການທວງດັ່ງກ່າວແມ່ນເກີນກຳນົດເວລາ 3 ປີພາຍຫຼັງທີ່ **ກ** (ເຈົ້າມູນມໍຣະດົກ) ເສຍຊີວິດ ສິດທວງຂອງ **ຄ** ຈະຕົກໄປ ການທວງເກີນກຳນົດເວລາ 3 ປີ ພາໃຫ້ **ຄ** ເສຍສິດ ຕາມຂຽນໄວ້ໃນມາດຕາ 52ຂອງປະມວນກົດໝາຍແພ່ງ. **2 . ກ** ມີລູກ 2 ຄົນຄື: **ຂ** ອາຍຸ 15 ປີ ແລະ **ຄ** ອາຍຸ 20 ປີ, ປີ 2018**ກ** ເສຍຊີວິດ, ພວກລູກພ້ອມກັນມ້ຽນຄາບສົ່ງສະການຈົນສຳເລັດ, ມູນມໍຣະດົກຂອງ**ກ**ແມ່ນ**ຄ** ເປັນຜູ້ຄຸ້ມຄອງ, ມາຮອດປີ 2022 **ຂ** ຈຶ່ງໄດ້ມາທວງເພື່ອແບ່ງປັນມູນມໍຣະດົກ ຈາກ **ຄ. ຄ** ຈະອ້າງວ່າອາຍຸຄວາມໃນການທວງເອົາມູນມໍຣະດົກນັ້ນໝົດແລ້ວ ແມ່ນບໍ່ຖືກຕ້ອງ ເນື່ອງຈາກວ່າໃນເວລາທີ່ເຈົ້າມູນເສຍຊີວິດນັ້ນ **ຂ** ແມ່ນມີອາຍຸພຽງແຕ່ 15 ປີ ແລະ ປີ 2016 **ຂ** ກໍມີອາຍຸໄດ້ 19 ປີ. ສະນັ້ນ, **ຂ** ມີສິດທວງໄດ້ ຕາມຂຽນໄວ້ມາດຕານີ້. **3. ກ** ມີລູກ 2 ຄົນຄື:**ຂ** ອາຍຸ 25 ປີ ແລະ **ຄ** ອາຍຸ 22 ປີ, ໃນເວລານັ້ນ **ຄ** ກຳລັງຖືກປະຕິບັດໂທດຢູ່ຄ້າຍຄຸມຂັງຢູ່ຕ່າງປະເທດ ເປັນເວລາ 5 ປີ. ປີ 2018 ກ ເສຍຊີວິດ, ແຕ່ **ຄ** ບໍ່ຮູ້ຈັກກ່ຽວກັບການເສຍຊີວິດຂອງ **ກ**. ຮອດປີ 2022 ຫຼັງຈາກ **ຄ** ປະຕິບັດໂທດສຳເລັດແລ້ວ **ຄ** ກັບຄືນມາ ສປປ ລາວ ຮູ້ກ່ຽວກັບການເສຍຊີວິດຂອງ **ກ** ແລະ ທວງເອົາມູນມໍຣະດົກ ກັບ **ຂ**, ແຕ່ **ຂ** ບໍ່ເຫັນດີ ແລະ ອ້າງ

	ວ່າອາຍຸຄວາມໃນການທວງເອົາມູນມໍຣະດົກນັ້ນໝົດແລ້ວ, ການກ່າວອ້າງຂອງ **ຂ** ແມ່ນບໍ່ຖືກຕ້ອງ ເພາະວ່າ ໃນເວລາທີ່ເຈົ້າມູນເສຍຊີວິດນັ້ນ **ຄ** ກໍບໍ່ສາມາດຮູ້ໄດ້ຍ້ອນຖືກປະຕິໂທດຢູ່ຕ່າງປະເທດ. ກໍລະນີນີ້ຕົກຢູ່ໃນ ກໍລະນີ " ມີເຫດຜົນອື່ນພຽງພໍ".
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກມາດຕາ 40 ຂອງກົດໝາຍວ່າດ້ວຍການສືບທອດມູນມໍຣະດົກ ປີ 2008 ໄດ້ກຳນົດ "ການຮ້ອງຟ້ອງເອົາມູນມໍຣະດົກ" ປະມວນກົດໝາຍແພ່ງປັບປຸງ ມາເປັນ " ການທວງ" ເພື່ອໃຫ້ຮູ້ກຳນົດເວລາໃນການເກີດສິດທວງຂອງຜູ້ມີສິດໃນການສືບທອດມູນມໍຣະດົກເພາະການຮ້ອງຟ້ອງນັ້ນກໍແມ່ນເກີດມາຈາກການທີ່ສິດທວງຂອງຜູ້ຮ້ອງຟ້ອງນັ້ນຍັງມີຕາມກົດໝາຍ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 52, 62 ວັກ 5 ແລະ 609 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ມະຕິຕົກລົງ ຂອງຄະນະປະຈຳສະພາແຫ່ງຊາດກ່ຽວກັບການຕີຄວາມໝາຍກົດໝາຍສະບັບເລກທີ 039/ຄປຈ, ລົງວັນທີ 31 ພຶດສະພາ 2012 ຕີຄວາມໝາຍຄຳວ່າ:" ມີເຫດຜົນອື່ນພຽງພໍ" ນັ້ນໝາຍເຖິງ ກໍລະນີຜູ້ໄປປະຕິບັດໜ້າທີ່ຢູ່ພາຍໃນ ຫຼື ຕ່າງປະເທດຊຶ່ງບໍ່ສາມາດມາທວງເອົາ ຫຼື ທຳການຮ້ອງຟ້ອງ, ກໍລະນີຜູ້ຖືກສານຕັດສິນເປັນຜູ້ຫາຍສາບສູນ ຫຼື ເປັນຜູ້ເສຍຊີວິດ, ກໍລະນີບຸກຄົນ ຫຼື ຜູ້ທີ່ຖືກປະຕິບັດໂທດຢູ່ຄ້າຍຄຸມຂັງພາຍໃນ ຫຼື ຕ່າງປະເທດທີ່ບໍ່ຮູ້ວ່າເຈົ້າມູນມໍຣະດົກເສຍຊີວິດ, ກໍລະນີມີການຕົກລົງເຫັນດີບໍ່ທັນແບ່ງປັນລະຫວ່າງຜູ້ສືບທອດມູນມໍຣະດົກດ້ວຍກັນ, ກໍລະນີບຸກຄົນເປັນບ້າເສຍຈິດໂດຍບໍ່ມີການແຕ່ງຕັ້ງຜູ້ປົກຄອງເມື່ອບຸກຄົນດັ່ງກ່າວນັ້ນມີສະຕິຊຳປະຊັນຍະຄືນ. ການທວງ ແມ່ນເປັນລາຍລັກອັກສອນນຳອົງການປົກຄອງບ້ານ ບ່ອນທີ່ຊັບນັ້ນຕັ້ງຢູ່ ຫຼື ນຳພາກສ່ວນທີ່ກ່ຽວຂ້ອງ

ມາດຕາ 609 ການແບ່ງປັນມູນມໍຣະດົກທີ່ຢູ່ໃນການຄຸ້ມຄອງຂອງຜູ້ມີສິດສືບທອດຜູ້ໃດໜຶ່ງ

ຜູ້ມີສິດສືບທອດມູນມໍຣະດົກທີ່ໄດ້ຄຸ້ມຄອງມູນມໍຣະດົກຊຶ່ງຍັງບໍ່ທັນໄດ້ແບ່ງປັນນັ້ນມີສິດສະເໜີແບ່ງປັນມູນມໍຣະດົກດັ່ງກ່າວໄດ້ທຸກເວລາເຖິງວ່າອາຍຸຄວາມທີ່ໄດ້ກຳນົດໄວ້ໃນມາດຕາ 608 ຂອງປະມວນກົດໝາຍສະບັບນີ້ຈະໝົດແລ້ວກໍຕາມ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ກ່ຽວກັບ ຜູ້ທີ່ຄຸ້ມຄອງມູນມໍຣະດົກທີ່ຍັງບໍ່ທັນໄດ້ແບ່ງປັນ ເຖິງແມ່ນວ່າອາຍຸຄວາມໃນການທວງໃຫ້ແບ່ງປັນມູນມໍຣະຈະສິ້ນສຸດລົງກໍຕາມ ແຕ່ຜູ້ກ່ຽວມີສິດສະເໜີແບ່ງປັນໄດ້.
ຕົວຢ່າງ	**ກ** ມີລູກ 2 ຄົນຄື: **ຂ** ອາຍຸ 25 ປີ ແລະ **ຄ** ອາຍຸ 22 ປີ, ຊັບສົມບັດຂອງ **ກ** ແມ່ນມີລົດກະບະ, ລົດຈັກ, ທີ່ດິນ ແລະ ເຮືອນ. ລົດກະບະ **ຄ** ເປັນຜູ້ຄຸ້ມຄອງນຳໃຊ້, ສ່ວນທີ່ດິນ ແລະ ເຮືອນ ພ້ອມດ້ວຍລົດຈັກແມ່ນ **ຂ** ເປັນຜູ້ຄຸ້ມຄອງ ແລະ ນຳໃຊ້ ເນື່ອງຈາກວ່າ **ຂ** ເປັນຜູ້ເບິ່ງແຍງລ້ຽງດູ **ກ**, ຕົກມາປີ 2015**ກ** ເສຍຊີວິດ ພວກລູກພ້ອມກັນມ້ຽນຄາບສົ່ງສະການຈົນສຳເລັດ, ມາຮອດປີ 2022 **ຄ** ຈຶ່ງທວງ ເພື່ອແບ່ງປັນທີ່ດິນ ແລະ ເຮືອນ ທີ່ເປັນມູນມໍຣະດົກຂອງ **ກ** ຈາກການຄຸ້ມຄອງຂອງ **ຂ,** ການທວງຂອງ **ຄ** ເກີນກຳນົດເວລາ 3 ປີ ສິດທວງຂອງ **ຄ** ຈະຕົກໄປ, ແຕ່ຖ້າ **ຂ** ຜູ້ຄຸ້ມຄອງມູນມໍຣະດົກ ຫາກເຕັມໃຈແບ່ງປັນໃຫ້ **ຄ** ກໍສາມາດແບ່ງປັນຕາມມາດຕານີ້ ເຖິງວ່າຈະກາຍ 3 ປີແລ້ວກໍຕາມ.

ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກມາດຕາ 41 ຂອງກົດໝາຍວ່າດ້ວຍການສືບທອດມູນມໍຣະດົກ ປີ 2008 ການແບ່ງປັນມູນມໍຣະດົກທີ່ຢູ່ໃນການຄຸ້ມຄອງຂອງຜູ້ມີສິດສືບທອດຜູ້ໃດໜຶ່ງກຳນົດຜູ້ສືບທອດມູນມໍຣະດົກ ນັ້ນເຫັນວ່າບໍ່ທັນເໝາະສົມເພາະບຸກຄົນດັ່ງກ່າວແມ່ນບໍ່ທັນໄດ້ເປັນຜູ້ສືບທອດເທື່ອເປັນພຽງຜູ້ມີສິດສືບທອດເທົ່ານັ້ນ ປະມວນກົດໝາຍແພ່ງ ຈຶ່ງປັບປຸງຄຳວ່າ: “ ຜູ້ສືບທອດ” ມາເປັນ “ຜູ້ມີສິດສືບທອດ”ແລະ ປັບປຸງມາດຕາທີ່ກ່ຽວຂ້ອງໃຫ້ຖືກຕ້ອງຕາມປະມວນກົດໝາຍແພ່ງ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 1748 ຂອງປະມວນກົດໝາຍແພ່ງ ແລະ ພານິດໄທ.
ມາດຕາອ້າງອີງ	ມາດຕາ 608 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 610 ການຮັບມູນມໍຣະດົກ

ຜູ້ມີສິດສືບທອດມູນມໍຣະດົກຕາມກົດໝາຍຈະຖືວ່າເປັນຜູ້ຮັບມູນມໍຣະດົກກໍຕໍ່ເມື່ອໄດ້ສະແດງເຈດຈຳນົງຂອງຕົນຮັບເອົາມູນມໍຣະດົກຕໍ່ອົງການປົກຄອງບ້ານບ່ອນທີ່ເປີດການສືບທອດ.

ຜູ້ມີສິດສືບທອດມູນມໍຣະດົກຕາມພິໄນກຳຈະຖືວ່າເປັນຜູ້ຮັບມູນມໍຣະດົກກໍຕໍ່ເມື່ອໄດ້ສະແດງເຈດຈຳນົງຂອງຕົນຮັບເອົາມູນມໍຣະດົກຕໍ່ຫ້ອງການທະບຽນສານບ່ອນທີ່ໄດ້ເກັບຮັກສາພິໄນກຳໄວ້ຫຼືຕໍ່ອົງການປົກຄອງບ້ານສຳລັບບ່ອນທີ່ບໍ່ມີຫ້ອງການທະບຽນສານ.

ການຮັບເອົາມູນມໍຣະດົກນັ້ນ ຕ້ອງໃຫ້ເຮັດຂຶ້ນພາຍໃນເວລາ ຫົກເດືອນ ນັບແຕ່ວັນເປີດການສືບທອດມູນມໍຣະດົກເປັນຕົ້ນໄປ.

ໃນກໍລະນີທີ່ຜູ້ມີສິດສືບທອດມູນມໍຣະດົກຜູ້ໃດໜຶ່ງຫາກໄດ້ສະລະມູນມໍຣະດົກ, ຜູ້ທີ່ຈະຮັບມູນມໍຣະດົກຊຶ່ງເປັນພູດຂອງຜູ້ສະລະນັ້ນຕ້ອງສະແດງເຈດຈຳນົງຂອງຕົນວ່າຈະຮັບເອົາມູນມໍຣະດົກດັ່ງກ່າວ ພາຍໃນໄລຍະເວລາທີ່ຍັງເຫຼືອ. ຖ້າກຳນົດເວລາທີ່ຍັງເຫຼືອນັ້ນຫາກຫຼຸດສາມເດືອນຜູ້ທີ່ຈະຮັບນັ້ນມີສິດຮ້ອງຂໍຕໍ່ສານໃຫ້ຍືດເວລາອອກຕື່ມອີກກໍໄດ້ແຕ່ບໍ່ໃຫ້ເກີນສາມເດືອນ.

ນາຍທະບຽນສານຫຼືນາຍບ້ານຕ້ອງອອກໃບຢັ້ງຢືນການຮັບມູນມໍຣະດົກໃຫ້ແກ່ຜູ້ມີສິດສືບທອດມູນມໍຣະດົກໄວ້ ເພື່ອເປັນຫຼັກຖານ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ກ່ຽວກັບການດຳເນີນການຮັບເອົາມູນມໍຣະດົກຂອງຜູ້ສືບທອດຕາມກົດໝາຍ ແລະ ຜູ້ສືບທດອຕາມພິໄນກຳ.
ຕົວຢ່າງ	**ກ** ມີລູກ2ຄົນຄື: **ຂ** ແລະ **ຄ**, **ກ** ມູນມໍຣະດົກຄື: ທີ່ດິນ ແລະ ເຮືອນໜຶ່ງຫຼັງທີ່ດິນນາ 3 ໄລ່, ລົດໜຶ່ງຄັນ ແລະ ເງິນຝາກທະນາຄານຈຳນວນ 100.000.000 ກີບ, **ກ** ເຮັດພິໄນກຳມອບເງິນຝາກທະນາຄານຈຳນວນ 20.000.000 ກີບ ໃຫ້ແກ່ **ຂ** ແລ້ວມອບພິໄນກຳ ໃຫ້ອົງການປົກຄອງບ້ານເປັນຜູ້ຮັກສາໄວ້, ສ່ວນຊັບສົມບັດອື່ນ ບໍ່ໄດ້ເຮັດພິໄນກຳມອບໃຫ້ຜູ້ໃດ, ເມື່ອ **ກ** ເສຍຊີວິດ ໃນວັນທີ 22 ພະຈິກ 2021ພາຍຫຼັງມ້ຽນຄາບສົ່ງສະການແລ້ວ, ໃນວັນທີ 1 ທັນວາ 2021 ອົງການປົກຄອງບ້ານ ໄດ້ເຊີນ **ຂ** ແລະ **ຄ** ເຂົ້າມາ ພ້ອມເປີດອ່ານພິໄນກຳ ກໍລະນີນີ້ ມີຊັບສົມບັດທີ່ຕ້ອງໄດ້ແບ່ງໃຫ້ຜູ້ສືບທອດຕາມພິໄນກຳ (ເງິນຈຳນວນ 20.000.000 ກີບ), ສ່ວນຊັບສົມບັດທີ່ຍັງເຫຼືອແມ່ນພວກລູກນຳມາແບ່ງກັນ **ຂ** ແລະ **ຄ** ຕົກລົງກັນວ່າ ໃຫ້ **ຂ** ເອົາທີ່ດິນ ແລະ ເຮືອນໜຶ່ງຫຼັງ, ສ່ວນ **ຄ** ເອົາທີ່ດິນນາ 3 ໄລ່, ລົດກະບະໜຶ່ງຄັນ ແລະ ເງິນຝາກທະນາຄານຈຳນວນ 80.000.000 ກີບ, ຕໍ່ມາ ວັນທີ 01 ມີນາ 2022 **ຄ** ສະແດງເຈດຈຳນົງສະລະມູນມໍຣະດົກທີ່ດິນນາ 3 ໄລ່ ແລ້ວມອບໃຫ້ແກ່ **ຂ,** ສ່ວນ **ຂ** ໄດ້ສະແດງເຈດຈຳນົງຮັບເອົາມູນມໍຣະດົກທີ່ **ຄ** ສະລະນັ້ນ ພາຍໃນກຳນົດເວລາ 6 ເດືອນ ນັບແຕ່ມື້ເປີດການສືບທອດມູນມໍຣະດົກ, ການສະລະ ແລະ ການຮັບມູນມໍຣະດົກຂອງ **ຄ** ແລະ **ຂ** ຕ້ອງມີການຢັ້ງຢືນໂດຍນາຍທະບຽນສານ ຫຼື ອົງການປົກຄອງບ້ານທີ່ເປີດການສືບທອດມູນມໍຣະດົກ.

ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 42 ຂອງກົດໝາຍວ່າດ້ວຍການສືບທອດມູນມໍຣະດົກປີ 2008 ການຮັບມູນມໍຣະດົກກຳນົດວ່າຜູ້ສືບທອດມູນມໍຣະດົກ ນັ້ນເຫັນວ່າບໍ່ທັນເໝາະສົມເພາະ ບຸກຄົນດັ່ງກ່າວແມ່ນບໍ່ທັນໄດ້ເປັນຜູ້ສືບທອດເທື່ອເປັນພຽງຜູ້ມີສິດສືບທອດເທົ່ານັ້ນ ປະມວນກົດໝາຍແພ່ງ ຈຶ່ງປັບປຸງຄຳວ່າ: " ຜູ້ສືບທອດ" ມາເປັນ "ຜູ້ມີສິດສືບທອດ"ປ່ຽນແປງຄຳວ່າ: "ສຳນັກງານທະບຽນສານ"ມາເປັນ"ຫ້ອງການທະບຽນສານ"ແລະ ປ່ຽນຄຳວ່າ: "ພະນັກງານທະບຽນສານ " ມາເປັນ "ນາຍທະບຽນສານ"ເພື່ອໃຫ້ມີຄວາມສອດຄ່ອງກັບກົດໝາຍວ່າດ້ວຍທະບຽນສານ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 572, 612 ແລະ 614 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ611ມູນມໍຣະດົກທີ່ບໍ່ໄດ້ຮັບເອົາພາຍໃນກຳນົດເວລາ

ມູນມໍຣະດົກທີ່ຍັງຄົງເປັນວັດຖຸເດີມຊຶ່ງຕົກເປັນພູດຂອງຜູ້ມີສິດສືບທອດມູນມໍຣະດົກຜູ້ໃດໜຶ່ງທີ່ບໍ່ໄດ້ຮັບເອົາພາຍໃນກຳນົດເວລາຕາມທີ່ໄດ້ກຳນົດໄວ້ໃນມາດຕາ610ວັກທີສາມ ຂອງປະມວນກົດໝາຍສະບັບນີ້ແຕ່ມູນມໍຣະດົກດັ່ງກ່າວພັດມີຜູ້ມີສິດສືບທອດມູນມໍຣະດົກອື່ນຮັບເອົາຫຼືໄດ້ມອບໃຫ້ແກ່ລັດແລ້ວ, ມູນມໍຣະດົກນັ້ນຈະຖືກສົ່ງຄືນໃຫ້ແກ່ຜູ້ມີສິດສືບທອດມູນມໍຣະດົກທີ່ບໍ່ມາຮັບເອົານັ້ນໄດ້ກໍຕໍ່ເມື່ອຜູ້ກ່ຽວຫາກໄດ້ຮັບຄວາມຍິນຍອມຈາກຜູ້ສືບທອດມູນມໍຣະດົກຫຼືລັດທີ່ໄດ້ຮັບເອົາມູນມໍຣະດົກເທົ່ານັ້ນ. ຖ້າຫາກບໍ່ໄດ້ຮັບຄວາມຍິນຍອມແລ້ວສານຈະເປັນຜູ້ຕັດສິນໃຫ້ຖ້າຜູ້ກ່ຽວຫາກມີເຫດຜົນພຽງພໍ.

ໃນກໍລະນີທີ່ຜູ້ມີສິດສືບທອດມູນມໍຣະດົກຕາມກົດໝາຍຫຼືຕາມພິໄນກຳໄດ້ເສຍຊີວິດພາຍຫຼັງທີ່ໄດ້ເປີດການສືບທອດມູນມໍຣະດົກແລ້ວແຕ່ຫາກຍັງບໍ່ທັນໄດ້ຮັບເອົາມູນມໍຣະດົກທີ່ຕົກເປັນພູດຂອງຜູ້ກ່ຽວຕາມກຳນົດເວລາທີ່ໄດ້ກຳນົດໄວ້ໃນມາດຕາ610ວັກທີສາມ ຂອງປະມວນກົດໝາຍສະບັບນີ້ກໍ່ໃຫ້ຜູ້ມີສິດສືບທອດມູນມໍຣະດົກຂອງຜູ້ກ່ຽວເປັນຜູ້ຮັບເອົາມູນມໍຣະດົກນັ້ນ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ວ່າ ແມ່ນໃຜທີ່ມີສິດໃນມູນມໍຣະດົກ ໃນກໍລະນີທີ່ຜູ້ສືບທອດຕາມກົດໝາຍ ຫຼື ຕາມພິໄນກຳບໍ່ໄດ້ຮັບເອົາມູນພາຍໃນກຳນົດເວລາ(ປະມວນກົດໝາຍແພ່ງມາດຕາ 610 ວັກ3).
ຕົວຢ່າງ	**1. ກ** ມີລົດເກງ 1 ຄັນ, **ຂ** ແລະ **ຄ** ເປັນຜູ້ມີສິດສືບທອດມູນມໍຣະດົກຂອງ **ກ,** ແຕ່ພາຍຫຼັງເປີດການສືບທອດມູນມໍຣະດົກ ເກີນ ຫົກເດືອນ ແລ້ວ **ຂ** ບໍ່ສະແດງເຈດຈຳນົງໃນຮັບມູນມໍຣະດົກທີ່ເປັນພູດຂອງຕົນ,. ຕໍ່ມາ **ຄ** ເປັນຜູ້ສືບທອດມູນມໍຣະດົກອີກຜູ້ໜຶ່ງໄດ້ເອົາ ລົດເກງ ທີ່ **ຂ** ບໍ່ຮັບເອົານັ້ນ, 1 ປີຕໍ່ມາ **ຂ** ປ່ຽນໃຈຕ້ອງການຈະຮັບເອົາລົດເກງນັ້ນຄືນຖ້າຫາກວ່າ **ຄ** ເຫັນດີສົ່ງຄືນໃຫ້ **ຂ** ແລ້ວ **ຂ** ຈະໄດ້ຄືນລົດເກງທີ່ຕົນ ບໍ່ຮັບເອົານັ້ນຄືນ, ຖ້າຫາກວ່າ **ຄ** ຫາກບໍ່ເຫັນດີສົ່ງຄືນແລ້ວ **ຂ** ແມ່ນສິດຮ້ອງຟ້ອງໄປຫາສານ,ສານຈະເປັນຜູ້ຕັດສິນໃຫ້ຖ້າຫາກວ່າ **ຂ** ຫາກມີເຫດຜົນທີ່ພຽງພໍເຊັ່ນ: **ຂ** ໄປເປັນທະຫານພັນທະຢູ່ເຂດຫ່າງໄກສອກຫຼີກ ທີ່ບໍ່ສາມາດຮັບຮູ້ໄດ້ ຫຼື **ຂ** ໄດ້ບວດເປັນພະແລ້ວໄດ້ໄປທຸດົງຢູ່ໃນປ່າເປັນເວລາຫຼາຍປີ. **2. ຂ** ເປັນຜູ້ສືບທອດມູນມໍຣະດົກຂອງ **ກ,** ພາຍຫຼັງມີການສະເໜີແບ່ງປັນມູນມໍຣະດົກ, **ຂ** ເສຍຊີວິດກ່ອນທີ່ຈະຮັບເອົາລົດທີ່ຖືກແບ່ງປັນຕົກເປັນພູດຂອງຕົນ, ສະນັ້ນ **ຄ** ຜູ້ສືບທອດຂອງ **ຂ** ສາມາດຮັບເອົາລົດຄັນດັ່ງກ່າວໄດ້.

ເຫດຜົນໃນການປັບປຸງ	ມາດຕານີ້ ປັບປຸງມາຈາກມາດຕາ 43 ຂອງກົດໝາຍວ່າດ້ວຍການສືບທອດມູນມໍຣະດົກ ປີ 2008 ມູນມໍຣະດົກທີ່ບໍ່ໄດ້ຮັບເອົາພາຍໃນກຳນົດເວລາ ກຳນົດວ່າ"ຜູ້ສືບທອດມູນມໍຣະດົກ" ນັ້ນເຫັນວ່າບໍ່ທັນເໝາະສົມເພາະ ບຸກຄົນດັ່ງກ່າວແມ່ນບໍ່ທັນໄດ້ເປັນຜູ້ສືບທອດເທື່ອເປັນພຽງຜູ້ມີສິດສືບທອດເທົ່ານັ້ນ ປະມວນກົດໝາຍແພ່ງ ຈຶ່ງປັບປຸງຄຳວ່າ: " ຜູ້ສືບທອດມູນມໍຣະດົກ" ມາເປັນ "ຜູ້ມີສິດສືບທອດມູນມໍຣະດົກ"ພ້ອມປັບປຸງມາດຕາທີ່ກ່ຽວຂ້ອງໃຫ້ຖືກຕ້ອງຕາມປະມວນກົດໝາຍແພ່ງ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 574 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ

ມາດຕາ612ການສະລະມູນມໍຣະດົກ

ຜູ້ມີສິດສືບທອດມູນມໍຣະດົກຕາມກົດໝາຍຫຼືຕາມພິໄນກຳອາດສະລະມູນມໍຣະດົກທີ່ເປັນພູດຂອງຕົນໃຫ້ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງຂອງລັດ, ມູນນິທິ, ກອງທຶນໃດໜຶ່ງ. ການສະລະມູນມໍຣະດົກໃຫ້ປະຕິບັດພາຍໃນເວລາ ຫົກເດືອນນັບແຕ່ວັນເປີດການສືບທອດມູນມໍຣະດົກເປັນຕົ້ນໄປ.

ຜູ້ສະລະມູນມໍຣະດົກຕາມກົດໝາຍຕ້ອງສະແດງເຈດຈຳນົງຂອງຕົນເປັນລາຍລັກອັກສອນຕໍ່ອົງການປົກຄອງບ້ານ ໂດຍບອກຊື່ຜູ້ທີ່ຕົນສະລະໃຫ້.

ຜູ້ສະລະມູນມໍຣະດົກຕາມພິໄນກຳຕ້ອງສະແດງເຈດຈຳນົງຂອງຕົນເປັນລາຍລັກອັກສອນຕໍ່ຫ້ອງການທະບຽນສານໂດຍບອກຊື່ ຜູ້ທີ່ຕົນສະລະໃຫ້.

ໃນກໍລະນີທີ່ບໍ່ໄດ້ບອກຊື່ຜູ້ທີ່ຕົນສະລະໃຫ້ນັ້ນມູນມໍຣະດົກດັ່ງກ່າວກໍຈະຕົກທອດເປັນຂອງຜູ້ມີສິດສືບທອດຄົນອື່ນ ຕາມກົດໝາຍ.

ໃນກໍລະນີທີ່ຜູ້ມີສິດສືບທອດມູນມໍຣະດົກບໍ່ສະແດງເຈດຈຳນົງວ່າຈະຮັບເອົາມູນມໍຣະດົກພາຍໃນກຳນົດເວລາຕາມທີ່ໄດ້ກຳນົດໄວ້ໃນມາດຕາ 610 ວັກທີສາມ ຂອງປະມວນກົດໝາຍສະບັບນີ້ກໍໃຫ້ຖືວ່າຜູ້ກ່ຽວເປັນຜູ້ສະລະມູນມໍຣະດົກແລະມູນມໍຣະດົກດັ່ງກ່າວຈະຕົກທອດເປັນຂອງຜູ້ມີສິດສືບທອດອື່ນຕາມກົດໝາຍ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ກ່ຽວກັບ ການມີສິດສະລະມູນມໍຣະດົກຂອງຜູ້ສືບທອດມູນມໍຣະດົກຕາມກົດໝາຍ ຫຼື ຕາມພິໄນກຳ, ວິທີການສະລະ, ຮູບແບບ, ໄລຍະເວລາ ແລະ ຜົນສະທ້ອນຂອງການສະລະມູນມໍຣະດົກ.
ຕົວຢ່າງ	**1.** ການສະລະມູນຕາມກົດໝາຍ: **ກ** ແລະ **ຂ** ມີລູກ 4 ຄົນຄື: **ຄ**, **ງ**, **ຈ** ແລະ **ສ,** ຕໍ່ມາ **ກ** ແລະ **ຂ** ເສຍຊີວິດທັງໝົດ, ມູນມໍຣະດົກຂອງ **ກ** ແລະ **ຂ** ມີຈຳນວນ 40.000.000 ກີບ, ວັນທີ 01 ມັງກອນ 2021 **ຄ**, **ງ**, **ຈ** ແລະ **ສ** ໄດ້ຕົກລົງແບ່ງປັນມູນມໍຣະດົກຂອງ **ກ** ແລະ **ຂ** ແຕ່ລະຄົນໄດ້ ຜູ້ລະ ຈຳນວນ10.000.000 ກີບ, ຕົກມາວັນທີ 01 ພຶດສະພາ 2021 **ຄ** ສະແດງເຈດຈຳນົງເປັນລາຍລັກອັກສອນຕໍ່ອົງການປົກຄອງບ້ານວ່າຜູ້ກ່ຽວຈະສະລະມູນມໍຣະດົກທີ່ເປັນພູດຂອງຕົນແລ້ວມອບໃຫ້ **ງ** ຜູ້ເປັນນ້ອງຊາຍແທນ, **ງ** ຜູ້ທີ່ຈະຮັບຕ້ອງໄດ້ສະແດງເຈດຈຳນົງຮັບເອົາໃນໄລຍະເວລາທີ່ຍັງເຫຼືອຕາມມາດຕາ 610 ວັກ 3 ຂອງປະມວນກົດໝາຍແພ່ງ, ຖ້າຫາຍກາຍກຳນົດ **ງ** ຈະເປັນຜູ້ສະລະມູນມໍຣະດົກເຊັ່ນກັນ ແລະ ມູນມໍຣະດົກດັ່ງກ່າວຈະຕົກທອດເປັນ **ຈ** ແລະ **ສ** ຕາມກົດໝາຍ. **2.** ການສະລະມູນຕາມພິໄນກຳ: **ກ** ແລະ **ຂ** ມີລູກ 4 ຄົນຄື: **ຄ**, **ງ**, **ຈ** ແລະ **ສ**, **ກ** ແລະ **ຂ** ມີຊັບທັງໝົດຈຳນວນ 40.000.000 ກີບ, **ກ** ເຮັດພິໄນກຳມອບເງິນຈຳນວນ 2.000.000 ກີບ ໃຫ້ **ຄ**, ຕໍ່ມາ

	ໄດ້ເກີດອຸບປະຕິເຫດເຮັດໃຫ້ **ກ** ແລະ **ຂ** ເສຍຊີວິດໝົດ, ຮອດວັນທີ 01 ມັງກອນ 2021 **ຄ**, **ງ**, **ຈ** ແລະ **ສ** ໄດ້ຕົກລົງແບ່ງປັນມູນມໍຣະດົກທີ່ເປັນຂອງພໍ່ແມ່, ຕົກມາວັນທີ 01 ພຶດສະພາ 2021**ຄ** ສະແດງເຈດຈຳນົງເປັນລາຍລັກອັກສອນຕໍ່ຫ້ອງການທະບຽນສານວ່າສະລະມູນມໍຣະດົກທີ່ເປັນພູດຂອງຕົນຕາມພິໄນກຳນັ້ນໃຫ້ **ງ** ຜູ້ເປັນນ້ອງຊາຍ, **ງ** ຜູ້ຮັບຕ້ອງສະແດງເຈດຈຳນົງວ່າຈະຮັບມູນມໍຣະດົກ ຫຼື ບໍ່ພາຍໃນ 6 ເດືອນ ຕາມມາດຕາ 610 ວັກ 3 ຂອງປະມວນກົດໝາຍແພ່ງ, ຖ້າຫາກກາຍເວລາໄປ ມູນມໍຣະດົກນັ້ນຈະເປັນຂອງ **ຈ** ແລະ **ສ** ຕາມກົດໝາຍ. **3.** ການສະລະມູນມໍຣະດົກທີ່ບໍ່ໄດ້ບອກຊື່ຜູ້ທີ່ຕົນສະລະໃຫ້ **ກ** ແລະ **ຂ** ມີລູກ 4 ຄົນຄື: **ຄ**, **ງ**, **ຈ** ແລະ **ສ,** ຕໍ່ມາເກີດອຸບປະຕິເຫດເຮັດໃຫ້**ກ** ແລະ **ຂ** ເສຍຊີວິດໝົດ, ຊັບສິນຂອງ **ກ** ແລະ **ຂ** ທີ່ເປັນມູນມໍຣະດົກທັງໝົດ ຄື: ທີ່ດິນໜຶ່ງຕອນພ້ອມຫ້ອງແຖວຈຳນວນ 4 ຫ້ອງ ມູນຄ່າຈຳນວນ 80.000.000 ກີບ, ຕໍ່ມາວັນທີ 01 ມັງກອນ 2021 **ຄ**, **ງ**, **ຈ** ແລະ **ສ** ໄດ້ຕົກລົງແບ່ງປັນມູນມໍຣະດົກດັ່ງກ່າວ ແບ່ງ ທີ່ດິນພ້ອມດ້ວຍຫ້ອງແຖວຜູ້ລະ 1 ຫ້ອງ, ຕົກມາວັນທີ 20 ພຶດສະພາ 2021 **ຄ** ສະແດງເຈດຈຳນົງເປັນລາຍລັກອັກສອນຕໍ່ອົງການປົກຄອງບ້ານວ່າຕົນສະລະບໍ່ເອົາທີ່ດິນພ້ອມຫ້ອງແຖວດັ່ງກ່າວນັ້ນ ໂດຍທີ່ **ຄ** ບໍ່ໄດ້ສະແດງເຈດຈຳນົງວ່າຈະສະລະໃຫ້ໃຜ. ກໍລະນີນີ້ຫ້ອງທີ່ດິນພ້ອມຫ້ອງແຖວທີ່ **ຄ** ສະລະນັ້ນແມ່ນ **ງ**, **ຈ** ແລະ **ສ** ຈະນຳມາແບ່ງປັນກັນຕາມກົດໝາຍ.
ເຫດຜົນຂອງການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 45 ຂອງກົດໝາຍວ່າດ້ວຍການສືບທອດມູນມໍຣະດົກ ປີ 2008 ການສະລະມູນມໍຣະດົກກຳນົດວ່າຜູ້ສືບທອດມູນມໍຣະດົກນັ້ນເຫັນວ່າບໍ່ທັນເໝາະສົມ ເພາະບຸກຄົນດັ່ງກ່າວແມ່ນບໍ່ທັນໄດ້ເປັນຜູ້ສືບທອດເທື່ອເປັນພຽງຜູ້ມີສິດສືບທອດເທົ່ານັ້ນ ປະມວນກົດໝາຍແພ່ງ ຈຶ່ງໄດ້ປັບປຸງຄຳວ່າ: "ຜູ້ສືບທອດ" ມາເປັນ"ຜູ້ມີສິດສືບທອດ"ປັບປຸງຄຳວ່າ: "ສຳນັກງານທະບຽນສານ "ມາເປັນ "ຫ້ອງການທະບຽນສານ" ເພື່ອໃຫ້ສອດຄ່ອງຕາມກົດໝາຍວ່າດ້ວຍທະບຽນສານ ແລະ ເພີ່ມ " ນິຕິບຸກຄົນ"ເຂົ້າໃນວັກທີ 1 ຂອງມາດຕາເພື່ອສາມາດເປັນຜູ້ທີ່ມີສິດຮັບມູນມໍຣະດົກທີ່ຜູ້ມີສິດສືບທອດໄດ້ສະລະໃຫ້ ແລະ ປັບປຸງມາດຕາທີ່ກ່ຽວຂ້ອງໃຫ້ຖືກຕ້ອງຕາມປະມວນກົດໝາຍແພ່ງ. ວັກທີ 5 ເພື່ອໃຫ້ຮູ້ຜົນສະທ້ອນທາງດ້ານກົດໝາຍກ່ຽວກັບຜູ້ມີສິດສືບທອດມູນມໍຣະດົກທີ່ຜູ້ອື່ນສະລະໃຫ້ຫາກບໍ່ສະແດງເຈດຈຳນົງຮັບເອົາຕາມກຳນົດເວລາແລ້ວຈະເປັນແນວໃດ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 1612 ຂອງປະມວນກົດໝາຍແພ່ງ ແລະ ພານິດໄທ. ມາດຕາ 938, 939 ແລະ 986 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 606 ແລະ 610 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນຫຼື ປະ ເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ613 ການສະລະມູນມໍຣະດົກຂອງຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດ

ຜູ້ມີສິດສືບທອດມູນມໍຣະດົກທີ່ຍັງບໍ່ທັນເຖິງກະສຽນອາຍຸສິບແປດປີຫຼື ຜູ້ເປັນບ້າເສຍຈິດ ຈະສະລະມູນມໍຣະດົກບໍ່ໄດ້ຖ້າ ພໍ່ ແມ່ ຫຼື ຜູ້ປົກຄອງບໍ່ຍິນຍອມ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ວ່າໃນກໍລະນີທີ່ຜູ້ສືບທອດແມ່ນຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດ ກໍລະນີນີ້ຈະສາມາດສະລະມູນມໍຣະດົກໄດ້ບໍ່, ຖ້າເຮັດໄດ້ຈະມີເງື່ອນໄຂຄືແນວໃດ.

ຕົວຢ່າງ	**1. ກ** ແລະ **ຂ** ມີລູກ 2 ຄົນຄື: **ຄ** ອາຍຸ 20 ປີ ແລະ **ງ** ອາຍຸ 16 ປີ, **ກ** ແລະ **ຂ** ມີສິນສົມສ້າງຄື: ທີ່ດິນ ແລະ ເຮືອນ 1 ຫຼັງ ມູນຄ່າຈຳນວນ 300.000.000 ກີບ ແລະ ເງິນຝາກທະນາຄານຈຳນວນ 100.000.000 ກີບ, **ກ** ເສຍຊີວິດ ພາຍຫຼັງທີ່ມີການເປີດການສືບທອດມູນມໍຣະດົກ ແລະ ແບ່ງປັນຕາມກົດໝາຍແລ້ວ, **ງ** ຢາກສະລະມູນມໍຣະດົກສ່ວນທີ່ເປັນພູດຂອງຕົນໂດຍບໍລິຈາກໃຫ້ວັດ ແຕ່ **ງ** ຍັງບໍ່ທັນພົ້ນກະສຽນອາຍຸຕ້ອງໄດ້ຮັບການຍິນຍອມຈາກ **ຂ** ຜູ້ເປັນແມ່ເສຍກ່ອນ, ຊຶ່ງ **ງ** ຕ້ອງແຈ້ງເຈດຈຳນົງດັ່ງກ່າວພ້ອມການເຫັນດີຂອງຜູ້ເປັນແມ່ ທີ່ເປັນລາຍລັກອັກສອນ ຍື່ນກັບອົງການປົກຄອງບ້ານທີ່ **ງ** ອາໄສຢູ່. **2. ກ** ແລະ **ຂ** ມີລູກ 2 ຄົນຄື: **ຄ** ແລະ **ງ** (ເປັນຜູ້ຖືກສານຕັດສິນວ່າບໍ່ມີຄວາມສາມາດດ້ານປະພຶດ ແລະ ສານແຕ່ງຕັ້ງ **ຈ** (ເມຍ **ງ**) ເປັນຜູ້ປົກຄອງ). **ກ** ແລະ **ຂ** ມີສິນສົມສ້າງຄື: ທີ່ດິນ ແລະ ເຮືອນ 1 ຫຼັງ ມູນຄ່າຈຳນວນ 300.000.000 ກີບ ແລະ ເງິນຝາກທະນາຄານຈຳນວນ 100.000.000 ກີບ, **ກ** ເສຍຊີວິດ ພາຍຫຼັງທີ່ມີການເປີດການສືບທອດມູນມໍຣະດົກ ແລະ ແບ່ງປັນຕາມກົດໝາຍແລ້ວ **ງ** ຢາກສະລະມູນມໍຣະດົກຂອງຕົນໃຫ້ແກ່ **ຄ** ຜູ້ເປັນອ້າຍ, ແມ່ນ **ງ** ບໍ່ສາມາດເຮັດໄດ້ຖ້າບໍ່ໄດ້ຮັບຄວາມຍິນຍອມຈາກ **ຈ** ທີ່ເປັນຜູ້ປົກຄອງ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 46 ຂອງກົດໝາຍວ່າດ້ວຍການສືບທອດມູນມໍຣະດົກປີ 2008 ການສະລະມູນມໍຣະດົກຂອງຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດ ກຳນົດວ່າຜູ້ສືບທອດມູນມໍຣະດົກ ນັ້ນເຫັນວ່າບໍ່ທັນເໝາະສົມເພາະບຸກຄົນດັ່ງກ່າວແມ່ນບໍ່ທັນໄດ້ເປັນຜູ້ສືບທອດເທື່ອເປັນພຽງຜູ້ມີສິດສືບທອດເທົ່ານັ້ນ ປະມວນກົດໝາຍແພ່ງ ປັບປຸງຄຳວ່າ: "ຜູ້ສືບທອດ" ມາເປັນ "ຜູ້ມີສິດສືບທອດ". ຜູ້ເປັນບ້າເສຍຈິດ ໃນມາດຕານີ້ໝາຍເຖິງ ຜູ້ຖືກຈຳກັດ ຫຼື ຜູ້ເສຍຄວາມສາມາດທາງດ້ານການປະພຶດ. ຜູ້ປົກຄອງ ໃນມາດຕານີ້ ໝາຍເຖິງ ຜູ້ຄຸ້ມຄອງມູນມໍຣະດົກ ຕາມທີ່ໄດ້ກຳນົດໃນມາດຕາ 623 ຂອງປະມວນກົດໝາຍແພ່ງ, ໃນກໍລະນີທີ່ມີການສືບທອດມູນມໍຣະດົກຕາມພິໄນກຳ ແມ່ນຜູ້ທີ່ຖືກກຳນົດໄວ້ໃນພິໄນກຳ ຕາມມາດຕາ 599 ຂອງປະມວນກົດໝາຍແພ່ງ, ຜູ້ປົກຄອງຂອງຜູ້ຖືກຈຳກັດ ຫຼື ເສຍຄວາມສາມາດທາງດ້ານການປະພຶດໝາຍເຖິງ ຜູ້ຄຸ້ມຄອງ ຕາມມາດຕາ 78 ຂອງປະມວນກົດໝາຍແພ່ງ, ພໍ່- ແມ່ ແມ່ນຜູ້ທີ່ມີສິດ ແລະ ພັນທະປົກປ້ອງສິດ ແລະ ຜົນປະໂຫຍດຂອງລູກ ຕາມມາດຕາ 215 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 1611 ຂອງປະມວນກົດໝາຍແພ່ງ ແລະ ພານິດໄທ. ມາດຕາ 179, 183, 184 ແລະ 191 ຂອງປະມວນກົດໝາຍແພ່ງ ຫວຽດນາມ. ມາດຕາ 5, 824, 826 ແລະ 859 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 68, 69, 70, 71, 78 215 ແລະ 623 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ

ມາດຕາ 614 ສິດຂອງຜູ້ສະລະມູນມໍຣະດົກ

ຜູ້ມີສິດສືບທອດທີ່ໄດ້ສະລະມູນມໍຣະດົກຊຶ່ງຕົກເປັນພູດຂອງຕົນໃຫ້ຜູ້ອື່ນແລ້ວກໍຍັງມີສິດສືບທອດມູນມໍຣະດົກແທນທີ່ກັນ ແຕ່ຫາກບໍ່ແມ່ນພູດທີ່ຕົນໄດ້ສະລະໄປແລ້ວນັ້ນ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ວ່າ ເຖິງຜູ້ສືບທອດຕາມກົດໝາຍ ຫຼື ຕາມພິໄນກຳ ໄດ້ສະລະມູນແລ້ວກໍຕາມ ຜູ້ກ່ຽວຍັງມີສິດສືບທອດມູນມໍຣະດົກແທນທີ່ກັນ ແລະ ສິດໃນການສືບທອດມູນຈາກການສືບທອດແທນທີ່ກັນຈະບໍ່ສູນເສຍໄປ.

ຕົວอย่าง	**1. ກ** (ພໍ່ຂອງ **ຂ**) ມີຊັບສິນເງິນຈຳນວນ 50.000.000 ກີບ, **ຂ** ມີຊັບສິນເງິນຈຳນວນ 15.000.000 ກີບ ແລະ ແຕ່ງດອງກັບ **ຄ** ມີລູກ 2 ຄົນຄື: **ງ** ແລະ **ຈ.** ວັນທີ 1 ມັງກອນ 2021 **ຂ** ເກີດອຸປະຕິເຫດ ແລະ ເສຍຊີວິດ, ຕໍ່ມາ **ຄ** ພ້ອມດ້ວຍພວກລູກໄດ້ແບ່ງປັນມູນມໍຣະດົກທີ່ເປັນຂອງ **ຂ** ນັ້ນເປັນ 3 ພູດສະເໝີກັນ ຜູ້ລະຈຳນວນ 5.000.000 ກີບ, ພາຍຫຼັງແບ່ງປັນແລ້ວ 2 ເດືອນຕໍ່ມາ **ງ** ສະແດງເຈດຈຳນົງສະລະມູນທີ່ໄດ້ຮັບໃຫ້ **ຄ,** ມາຮອດເດືອນ ທັນວາ 2021 **ກ** ໄດ້ເສຍຊີວິດ ມູນມໍຣະດົກທີ່ເປັນຂອງ **ກ** ນັ້ນ **ງ** ຜູ້ສືບທອດແທນທີ່ຂອງ **ຂ** ກໍຍັງມີສິດສືບທອດມູນມໍຣະດົກຂອງ **ກ** ຕາມກົດໝາຍ. **2.ກ** (ພໍ່ຂອງ **ຂ**) ມີຊັບສິນເງິນຈຳນວນ 50.000.000 ກີບ, **ຂ** ໄດ້ແຕ່ງດອງກັບ **ຄ** ມີລູກ 2 ຄົນຄື: **ງ** ແລະ **ຈ** , **ກ** ໄດ້ເຮັດພິໄນກຳມອບເງິນຈຳນວນ 2.000.000 ກີບ ໃຫ້ແກ່ **ງ** (ຜູ້ເປັນຫຼານ), ວັນທີ 1 ມັງກອນ 2021**ຂ** ເກີດອຸບປະຕິເຫດ ແລະ ເສຍຊີວິດ, ຕົກມາຮອດເດືອນ ທັນວາ 2021 **ກ** ເສຍຊີວິດ, ພາຍຫຼັງທີ່ມີການແບ່ງປັນມູນມໍຣະດົກທີ່ເປັນຂອງ **ກ** ແລ້ວນັ້ນ **ງ** ສະແດງເຈດຈຳນົງສະລະມູນມໍຣະດົກທີ່ **ກ** ມອບໃຫ້ຕາມພິໄນກຳໃຫ້ **ຈ,** ແຕ່ **ງ** ຜູ້ສືບທອດແທນທີ່ຂອງ **ຂ** ກໍຍັງມີສິດສືບທອດມູນມໍຣະດົກຂອງ **ກ** ຕາມກົດໝາຍ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກມາດຕາ 23 ຂອງກົດໝາຍວ່າດ້ວຍການສືບທອດມູນມໍຣະດົກ ປີ 2008 ສິດຂອງຜູ້ສະລະມູນມໍຣະດົກກຳນົດວ່າຜູ້ສືບທອດມູນມໍຣະດົກ ນັ້ນເຫັນວ່າບໍ່ທັນເໝາະສົມເພາະ ບຸກຄົນດັ່ງກ່າວແມ່ນບໍ່ທັນໄດ້ເປັນຜູ້ສືບທອດເທື່ອເປັນພຽງຜູ້ມີສິດສືບທອດເທົ່ານັ້ນ ປະມວນກົດໝາຍແພ່ງ ຈຶ່ງໄດ້ປັບປຸງຄຳວ່າ: " ຜູ້ສືບທອດ" ມາເປັນ "ຜູ້ມີສິດສືບທອດ"ປັບປຸງຄຳວ່າ: " ມີສິດຮັບມູນມໍຣະດົກ"ມາເປັນ" ມີສິດສືບທອດມູນມໍຣະດົກ"ເພື່ອໃຫ້ມີຄວາມສອດຄ່ອງກັບເນື້ອໃນຂອງມາດຕາ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ປະເທດອື່ນ	ມາດຕາ 1645 ຂອງປະມວນກົດໝາຍແພ່ງ ແລະ ພານິດໄທ.
ມາດຕາອ້າງອີງ	ມາດຕາ 588, 613 ແລະ 612 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນຫຼື ປະ ເພນີສານ	ສືບຕໍ່ຄົ້ນຄວ້າ

ຂ. ການເສຍສິດສືບທອດມູນມໍຣະດົກ

ມາດຕາ 615 ການເສຍສິດສືບທອດມູນມໍຣະດົກ

ຜູ້ມີສິດສືບທອດມູນມໍຣະດົກ ຈະເສຍສິດສືບທອດມູນມໍຣະດົກ ໃນກໍລະນີດັ່ງນີ້:

1. ການສໍ້ໂກງ ຫຼື ຍັກຍອກມູນມໍຣະດົກ;
2. ການເສຍສິດສືບທອດມູນມໍຣະດົກຂອງພໍ່, ແມ່ ແລະ ລູກຕາມຄຳຕັດສິນຂອງສານ;
3. ການເສຍສິດສືບທອດມູນມໍຣະດົກຕາມກົດໝາຍແລະຕາມພິໄນກຳ.

ຈຸດປະສົງ	ເພື່ອກຳນົດໃຫ້ມີຄວາມເຂົ້າໃຈງ່າຍຂຶ້ນ ກ່ຽວກັບເຫດຜົນການເສຍສິດສືບທອດມູນມໍຣະດົກຂອງຜູ້ສືບທອດ.
ຕົວอย่าง	**1. ກ** ແລະ **ຂ** ມີລູກ 3 ຄົນຄື: **ຄ**, **ງ** ແລະ **ສ, ກ** ແລະ **ຂ** ມີສິນສົມສ້າງເງິນຈຳນວນ 300.000.000 ກີບ, ຕໍ່ມາປີ 2020 **ກ** ແລະ **ຂ** ເກີດອຸປະຕິເຫດເສຍຊີວິດທັງສອງ, **ຄ** ເປັນຜູ້ຢູ່ນຳພໍ່ແມ່ໄດ້ຄຸ້ມຄອງມູນມໍຣະດົກໄວ້, **ຄ** ແຈ້ງຕໍ່ **ງ** ແລະ **ສ** ວ່າມູນຂອງພໍ່ແມ່ ມີ ເງິນຈຳນວນ 200.000.000 ກີບ ເທົ່ານັ້ນໃນຕົວຈິງ **ຄ** ໄດ້ ຍັກຍອກເອົາເງິນຈຳນວນ 100.000.000 ກີບ ໄປໃຊ້ຈ່າຍຜູ້ດຽວ, ເມື່ອເປີດການສືບທອດມູນມໍຣະດົກ **ຄ** ແມ່ນຈະເສຍສິດ ໃນການສືບທອດຕາມວັກ 1 ຂໍ້ 1 ມາດຕານີ້.

	2. ກ ແລະ **ຂ** ຖືກສານຕັດສິນປົດສິດການເປັນພໍ່ແມ່ຈາກ **ຄ**(ຜູ້ເປັນລູກ) ແລ້ວ ພວກກ່ຽວກໍຈະເສຍສິດໃນການສືບທອດມູນມໍຣະດົກຂອງ **ຄ** ຖ້າວ່າ **ຄ** ຫາກ ໄດ້ເສຍຊີວິດ **ກ** ແລະ **ຂ** ກໍຈະບໍ່ມີສິດໃນການທວງເພື່ອສືບທອດມູນມໍຣະດົກ ຂອງ **ຄ** ຕາມວັກ 1 ຂໍ້ 2 ມາດຕານີ້, ສ່ວນການເສຍສິດຕາມກົດໝາຍ ແລະ ຕາມ ພິໄນກຳນັ້ນແມ່ນໃຫ້ເບິ່ງຕົວຢ່າງໃນມາດຕາ 618 ຂອງປະມວນກົດໝາຍ ແພ່ງ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 47 ຂອງກົດໝາຍວ່າດ້ວຍການສືບທອດມູນ ມໍຣະດົກປີ2008ການເສຍສິດສືບທອດມູນມໍຣະດົກກຳນົດວ່າຜູ້ສືບທອດມູນ ມໍຣະດົກ ນັ້ນເຫັນວ່າບໍ່ທັນເໝາະສົມເພາະ ບຸກຄົນດັ່ງກ່າວແມ່ນບໍ່ທັນໄດ້ເປັນ ຜູ້ສືບທອດເທື່ອເປັນພຽງຜູ້ມີສິດສືບທອດເທົ່ານັ້ນ ປະມວນກົດໝາຍແພ່ງ ໄດ້ ປັບປຸງຄຳວ່າ: " ຜູ້ສືບທອດ" ມາເປັນ "ຜູ້ມີສິດສືບທອດ" ພ້ອມທັງໄຈ້ແຍກສາ ເຫດຂອງການເສຍສິດໃນການສືບທອດມູນມໍຣະດົກ ອອກເປັນຂໍ້ໆເພື່ອໃຫ້ ຜູ້ອ່ານມີຄວາມເຂົ້າໃຈງ່າຍ. ການສໍ້ໂກງ ຫຼື ການຍັກຍອກ ແມ່ນມີຄຳຕັດສິນ ຫຼື ຄຳພິພາກສາທາງອາຍາທີ່ໃຊ້ ໄດ້ຢ່າງເດັດຂາດກ່ອນ.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງ ຂອງປະເທດອື່ນ	ມາດຕາ 891 ແລະ 892 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 616, 617 ແລະ 618 ຂອງປະມວນກົດໝາຍແພ່ງ. ມາດຕາ 233 ແລະ 234 ຂອງປະມວນກົດໝາຍອາຍາ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ616ການສໍ້ໂກງ, ການຍັກຍອກມູນມໍຣະດົກ

ຜູ້ສືບທອດມູນມໍຣະດົກທີ່ໄດ້ສໍ້ໂກງ, ປິດບັງ, ຍັກຍອກມູນມໍຣະດົກຫຼາຍກວ່າພູດທີ່ຕົນຄວນຈະໄດ້ ຮັບກໍຈະບໍ່ໄດ້ຮັບມູນມໍຣະດົກນັ້ນແຕ່ຢ່າງໃດ ແລະ ຍັງຕ້ອງສົ່ງມູນມໍຣະດົກທີ່ໄດ້ເອົາໄປນັ້ນຄືນທັງໝົດ.

ຖ້າການສໍ້ໂກງ, ການປິດບັງ, ການຍັກຍອກມູມໍຣະດົກນັ້ນຫາກໜ້ອຍກວ່າຫຼືເທົ່າກັບພູດທີ່ຕົນຄວນ ຈະໄດ້ຮັບກໍຈະບໍ່ໄດ້ຮັບພູດທີ່ຕົນຄວນໄດ້ຮັບນັ້ນອີກ.

ມາດຕານີ້ຈະບໍ່ມີຜົນບັງຄັບໃຊ້ຕໍ່ຜູ້ມີສິດສືບທອດມູນມໍຣະດົກຕາມພິໄນກຳຊຶ່ງເຈົ້າມູນມໍຣະດົກໄດ້ ເຮັດພິໄນກຳໃຫ້ຜູ້ກ່ຽວແລ້ວ.

ຈຸດປະສົງ	ເພື່ອໃຫ້ຮູ້ວ່າ ຜົນທາງດ້ານກົດໝາຍຂອງການສໍ້ໂກງ, ຍັກຍອກມູນມໍຣະດົກ ຂອງຜູ້ທີ່ມີສິດສືບທອດມູນມໍຣະດົກ.
ຕົວຢ່າງ	**1. ກ** ແລະ **ຂ** ມີຊັບສົມບັດທັງໝົດມູນຄ່າຈຳນວນ 160.000.000 ກີບ ແລະ ມີລູກ 3 ຄົນຄື: **ຄ**, **ງ** ແລະ **ຈ**, ຕໍ່ມາກ ແລະ **ຂ** ເກີດອຸບປະຕິເຫດເສຍ ຊີວິດ, ຜ່ານການມ້ຽນຄາບສົ່ງສະການແລ້ວມູນມໍຣະດົກຂອງຍັງເຫຼືອຈຳນວນ ເງິນຈຳນວນ 150.000.000 ກີບ, **ຄ** ເປັນຜູ້ຢູ່ນຳພໍ່ແມ່ ແລະ ຮັກສາເງິນ ທີ່ຍັງເຫຼືອນັ້ນໄວ້. **ກໍລະນີ1: ວັກ 1 ຂອງມາດຕາ 616** **ຄ** ເອົາເງິນທີ່ເປັນມູນມໍຣະດົກໄປຫຼິ້ນການພະນັນ ແລະ ເອົາໄປໃຊ້ຈ່າຍພຽງ ຄົນດຽວເງິນຈຳນວນ 100.000.000ກີບ ແລ້ວບອກ **ງ** ແລະ **ຈ** ວ່າມູນ ມໍຣະດົກຂອງພໍ່ແມ່ ມີ ເງິນຈຳນວນ 50.000.000 ກີບ ຈຶ່ງນຳມາແບ່ງປັນ ກັນ, ແຕ່ຜ່ານການກວດກາຄືນເຫັນວ່າມູນມໍຣະດົກພໍ່ແມ່ມີ ເງິນຈຳນວນ 150.000.000 ກີບ ແລະ ຖືກ **ຄ** ຍັກຍອກເອົາໄປຕາມຄຳຕັດສິນຂອງສານ, **ຄ** ຕ້ອງສົ່ງມູນມໍຣະດົກທີ່ເອົາໄປນັ້ນຄືນທັງໝົດ ແລະ ເສຍສິດໃນການສືບ ທອດມູນມໍຣະດົກ, ແຕ່ຖ້າຫາກວ່າ **ຄ** ສາມາດພິສູດໄດ້ວ່າຕົນເອງບໍ່ໄດ້ຍັກ ຍອກເອົາແລ້ວ **ຄ** ຈະໄດ້ຮັບການແບ່ງປັນຕາມກົດໝາຍ ຄືກັບ **ງ** ແລະ **ຈ**.

	ກໍລະນີ 2: ວັກ 2 ຂອງມາດຕາ 616 **ຄ** ເອົາເງິນທີ່ເປັນມູນມໍຣະດົກຈຳນວນ 40.000.000 ກີບໄປຫຼີ້ນການພະນັນ ແລະ ໃຊ້ຈ່າຍພຽງຄົນດຽວໂດຍປິດບັງ ແລະ ວ່າມູນມໍຣະດົກຂອງພໍ່ແມ່ແມ່ນ ມີພຽງແຕ່ຈຳນວນ 110.000.000 ກີບ ແລ້ວນຳມາແບ່ງປັນກັນ, ແຕ່ຜ່ານ ການກວດກາຄືນກ່ຽວກັບມູນມໍຣະດົກເຫັນວ່າເງິນຕົວຈິງຍັງເຫຼືອທັງໝົດຈຳ ນວນ 150.000.000 ກີບ, ເງິນແບ່ງເປັນ 3 ພູດໃຫ້ພວກລູກ ຂອງ **ກ** ແລະ **ຂ** ຜູ້ລະ ຈຳນວນ 50.000.000 ກີບ, ພູດຂອງ **ຄ** ແມ່ນຍັງ ຈຳນວນ 10.000.000 ກີບ ຈະບໍ່ໄດ້ຮັບອີກ ເນື່ອງຈາກວ່າຜູ້ກ່ຽວປິດບັງໄປຫຼີ້ນການພະນັນຈຳນວນ 40.000.000 ກີບ ສະນັ້ນ ຈຳນວນ10.000.000 ກີບນີ້ມາແບ່ງປັນໃຫ້ຜູ້ ສືບທອດມູນມໍຣະດົກທີ່ບໍ່ໄດ້ກະທຳຜິດກຳຄືງແລະຈຜູ້ລະເຄິ່ງ. **2. ວັກ 3 ຂອງມາດຕາ 616** **ກ** ແລະ **ຂ** ມີຊັບສົມບັດທັງໝົດເງິນຈຳນວນ 160.000.000 ກີບ ແລະ ມີລູກ3 ຄົນຄື: **ຄ**, **ງ** ແລະ **ຈ**, **ກ** ເຮັດພິໄນກຳມອບເງິນຈຳນວນ 20.000.000 ກີບ ໃຫ້ **ຄ,** ຕໍ່ມາກ ແລະ **ຂ** ເກີດອຸບປະຕິເຫດເສຍຊີວິດ, ຜ່ານການມ້ຽນ ຄາບສົ່ງສະການແລ້ວມູນມໍຣະດົກຂອງຍັງເຫຼືອເງິນຈຳນວນ 150.000.000 ກີບ, **ຄ** ຜູ້ຮັກສາເງິນທີ່ຍັງເຫຼືອໄດ້ປິດບັງເງິນຈຳນວນ 60.000.000 ກີບ ໄວ້ພ້ອມ ເອົາມູນມໍຣະດົກ ເງິນຈຳນວນ 90.000.000 ກີບ ເທົ່ານັ້ນ ນຳມາ ແບ່ງປັນກັບ **ງ** ແລະ **ຈ**, ຕໍ່ມາ **ງ** ແລະ **ຈ** ຮູ້ວ່າ **ຄ** ປິດບັງເງິນຈຳນວນ 60.000.000 ກີບ, **ງ** ແລະ **ຈ** ຈຶ່ງທວງເອົາເງິນຈຳນວນດັ່ງກ່າວຈາກ **ຄ, ຄ** ຈະຕ້ອງສົ່ງເງິນຈຳນວນ 60.000.000 ກີບ ທີ່ປິດບັງເກີນຈາກເງິນຈຳນວນ 50.000.000 ກີບ ພູດທີ່ **ຄ** ຄວນຈະໄດ້ນັ້ນ ຄືນໃຫ້ແກ່ **ງ** ແລະ **ຈ**, ແຕ່ວ່າ **ກ** ເຮັດພິໄນກຳມອບເງິນໃຫ້ **ຄ** ຈຳນວນ 20.000.000 ກີບ ແລ້ວ , ສະນັ້ນ **ຄ** ຈະບໍ່ເສຍສິດໃນການຮັບເອົາມູນທີ່ເປັນເງິນ ຈຳນວນ20.000.000 ກີບ ຕາມພິໄນກຳດັ່ງກ່າວ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກມາດຕາ 48 ຂອງກົດໝາຍວ່າດ້ວຍການສືບທອດມູນ ມໍຣະດົກ ປີ 2008 ການສໍ້ໂກງ, ການຍັກຍອກມູນມໍຣະດົກໃນວັກ 2 ກຳນົດ ວ່າຜູ້ສືບທອດມູນມໍຣະດົກ ນັ້ນເຫັນວ່າບໍ່ທັນເໝາະສົມເພາະ ບຸກຄົນດັ່ງກ່າວ ແມ່ນບໍ່ທັນໄດ້ເປັນຜູ້ສືບທອດເທື່ອເປັນພຽງຜູ້ມີສິດສືບທອດເທົ່ານັ້ນປະມວນ ກົດໝາຍແພ່ງ ຈຶ່ງປັບປຸງຄຳວ່າ: " ຜູ້ສືບທອດ" ມາເປັນ "ຜູ້ມີສິດສືບທອດ" ພ້ອມທັງໄຈ້ແຍກອອກເປັນແຕ່ລະວັກໃຫ້ຜູ້ອ່ານມີຄວາມເຂົ້າໃຈງ່າຍ, ການສໍ້ ໂກງ, ຍັກຍອກ ໃນມາດຕານີ້ແມ່ນຕ້ອງມີຄຳຕັດສິນຄະດີອາຍາທີ່ໃຊ້ໄດ້ຢ່າງ ເດັດຂາດກ່ອນ.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງ ຂອງປະເທດອື່ນ	ມາດຕາ 1605 ຂອງປະມວນກົດໝາຍແພ່ງ ແລະ ພານິດໄທ.
ມາດຕາອ້າງອີງ	ມາດຕາ 615 ຂອງປະມວນກົດໝາຍແພ່ງ. ມາດຕາ 233 ແລະ 234 ຂອງປະມວນກົດໝາຍອາຍາ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ

ມາດຕາ 617 ການເສຍສິດສືບທອດມູນມໍຣະດົກຂອງ ພໍ່, ແມ່ ແລະ ລູກຕາມຄຳຕັດສິນຂອງສານ

ພໍ່ແມ່ທີ່ຖືກຕັດສິດຈາກຄວາມເປັນພໍ່ແມ່ ຕາມຄຳຕັດສິນຂອງສານ ຈະບໍ່ມີສິດສືບທອດມູນມໍຣະດົກ ຂອງລູກ, ສ່ວນລູກນັ້ນກໍຈະບໍ່ມີສິດສືບທອດມູນມໍຣະດົກຂອງພໍ່ແມ່ເຊັ່ນດຽວກັນ, ເວັ້ນເສຍແຕ່ລູກຫາກ ຍັງບໍ່ທັນພົ້ນກະສຽນອາຍຸ.

ໃນກໍລະນີທີ່ພໍ່ແມ່ຫາກບໍ່ປະຕິບັດພັນທະໃນການລ້ຽງດູລູກກໍຈະບໍ່ມີສິດສືບທອດມູນມໍຣະດົກຂອງ ລູກ. ສ່ວນລູກທີ່ພົ້ນກະສຽນອາຍຸຫາກບໍ່ປະຕິບັດພັນທະໃນການລ້ຽງດູພໍ່ແມ່ຕາມຄຳຕັດສິນຂອງສານ ກໍ ຈະບໍ່ມີສິດສືບທອດມູນມໍຣະດົກຂອງພໍ່ແມ່ເຊັ່ນດຽວກັນ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ວ່າ ພໍ່ແມ່ທີ່ຖືກສານຕັດສິດຈາກຄວາມເປັນພໍ່ແມ່ຕາມຄຳຕັດສິນຂອງສານດ້ວຍເຫດຜົນ ບໍ່ປະຕິບັດພັນທະໃນການລ້ຽງດູລູກ ຈະເສຍສິດໃນການສືບທອດມູນມໍຣະດົກຂອງລູກ, ສ່ວນລູກທີ່ພົ້ນກະສຽນອາຍຸແລ້ວ ຫາກບໍ່ປະຕິບັດພັນທະໃນການລ້ຽງດູພໍ່ແມ່ຕາມຄຳຕັດສິນຂອງສານ ກໍຈະເສຍສິດສືບທອດມູນມໍຣະດົກຂອງພໍ່ແມ່ເຊັ່ນດຽວກັນ.
ຕົວຢ່າງ	**1. ກ** ແລະ **ຂ** ມີລູກ 2 ຄົນຄື: **ຄ** ອາຍຸ 21 ປີ (ມີຊັບສົມບັດມູນຄ່າ ຈຳນວນ 50.000.000 ກີບ) ແລະ **ງ** ອາຍຸ 20 ປີ, **ກ** ແລະ **ຂ** ມີຊັບສົມບັດມູນຄ່າ ຈຳນວນ 200.000.000 ກີບ. **ກ** ແລະ **ຂ** ກະທຳສິ່ງທີ່ໂຫດຮ້າຍຕໍ່ກັບ **ຄ**, ຈາກນັ້ນ **ຄ** ຮ້ອງຟ້ອງຕໍ່ສານເພື່ອປົດສິດຄວາມເປັນພໍ່ແມ່ ແລະ ມີຄຳຕັດສິນຂອງສານກ່ຽວກັບການປົດສິດການເປັນພໍ່ແມ່ກັບ **ຄ,** ສະນັ້ນ ເມື່ອພໍ່ແມ່ເສຍຊີວິດ **ຄ** ກໍຈະບໍ່ມີສິດໃນການສືບທອດມູນມໍຣະດົກຂອງພໍ່ແມ່ກົງກັນຂ້າມຖ້າຫາກ **ຄ** ເສຍຊີວິດພໍ່ແມ່ກໍຈະບໍ່ມີສິດໃນການທອດມູນມໍຣະດົກຂອງ **ຄ** ເຊັ່ນກັນ. ເວັ້ນເສຍແຕ່ກໍລະນີທີ່ **ຄ** ຫາກຍັງບໍ່ພົ້ນກະສຽນອາຍຸ ເຖິງວ່າ ຈະຖືກສານຕັດສິນປົດສິດການເປັນພໍ່ແມ່ແລ້ວກໍຕາມ **ຄ** ກໍຍັງມີສິດສືບທອດມູນມໍຣະດົກຂອງ **ກ** ແລະ **ຂ** ຢູ່. **2. ກ** ເປັນພໍ່ **ຄ,** ແຕ່ **ກ** ບໍ່ປະຕິບັດພັນທະໃນການເບິ່ງແຍງລ້ຽງດູລູກເຊັ່ນ: ການສຶກສາອົບຮົມ, ສົ່ງເສຍໃຫ້ຮ່ຳຮຽນ, ບໍ່ປົກປ້ອງສິດຜົນປະ�โຫຍດຂອງ **ຄ** ກໍຈະບໍ່ມີສິດສືບທອດມູນມໍຣະດົກຂອງ **ຄ** ຜູ້ປັນລູກ ກົງກັນຂ້າມຫາກ **ຄ** ເຖິງກະສຽນອາຍຸແລ້ວບໍ່ປະຕິບັດພັນທະໃນການລ້ຽງດູພໍ່ແມ່ຕາມຄຳຕັດສິນຂອງສານ ຜູ້ກ່ຽວກໍບໍ່ມີສິດໃນການສືບທອດມູນມໍຣະດົກຂອງພໍ່ແມ່ເຊັ່ນກັນ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 49 ຂອງກົດໝາຍວ່າດ້ວຍການສືບທອດມູນມໍຣະດົກ ປີ 2008 ການເສຍສິດສືບທອດມູນມໍຣະດົກຂອງພໍ່, ແມ່ແລະລູກຕາມຄຳຕັດສິນຂອງສານໄດ້ກຳນົດໃນວັກ 2 ກຳນົດວ່າ: ໃນກໍລະນີພໍ່ແມ່ຫາກບໍ່ປະຕິບັດພັນທະໃນການລ້ຽງດູລູກ ຕາມຄຳຕັດສິນຂອງສານ ເຫັນວ່າບໍ່ທັນສອດຄ່ອງ ເພາະວ່າການປະຕິບັດພັນທະໃນການລ້ຽງດູລູກຂອງພໍ່-ແມ່ນັ້ນແມ່ນຕ້ອງໄດ້ເຮັດຫຼືກະທຳໂດຍບໍ່ຈຳເປັນຕ້ອງມີຄຳຕັດສິນຂອງສານ ປະມວນກົດໝາຍແພ່ງ ມາດຕາ 617 ວັກ 2 ຂອງປະມວນກົດໝາຍແພ່ງໄດ້ຕັດເອົາປະ�โຫຍກທີ່ວ່າ: "ຕາມຄຳຕັດສິນຂອງສານ"ມາດຕານີ້ແມ່ນຢາກເນັ້ນໜັກເຖິງຜົນທາງດ້ານກົດໝາຍຂອງການເສຍສິດສືບທອດມູນມໍຣະດົກ ລະຫວ່າງພໍ່-ແມ່ ແລະ ລູກຈາກຄຳຕັດສິນຂອງສານ ແລະ ຈາກການບໍ່ປະຕິບັດພັນທະໃນການລ້ຽງດູຕາມຄຳຕັດສິນຂອງສານ ລູກທີ່ບໍ່ປະຕິບັດພັນທະໃນການລ້ຽງດູພໍ່ແມ່ນັ້ນ ໝາຍເຖິງລູກທີ່ພົ້ນກະສຽນອາຍຸຕາມມາດຕາ 69 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 69, 217, 218, 220 ແລະ 615ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ

ມາດຕາ618 ການເສຍສິດສືບທອດມູນມໍຣະດົກຕາມກົດໝາຍແລະຕາມພິໄນກຳ

ຜູ້ເສຍສິດສືບທອດມູນມໍຣະດົກຕາມກົດໝາຍຫຼືຕາມພິໄນກຳມີດັ່ງນີ້:

1. ຜູ້ທີ່ຖືກສານຕັດສິນວ່າໄດ້ມີເຈດຕະນາຫຼືພະຍາຍາມເຮັດໃຫ້ເຈົ້າມູນມໍຣະດົກຫຼືຜູ້ມີສິດສືບທອດມູນມໍຣະດົກຜູ້ໃດໜຶ່ງເສຍຊີວິດຫຼືບາດເຈັບສາຫັດ ເພື່ອຍາດຊິງເອົາມູນມໍຣະດົກ;
2. ຜູ້ທີ່ໄດ້ທຳລາຍ, ປົດບັງຫຼືປອມແປງພິໄນກຳທັງໝົດຫຼືບາງສ່ວນ;
3. ຜູ້ທີ່ຢູ່ແຂວງຫຼືເມືອງດຽວກັນກັບຜູ້ເສຍຊີວິດເມື່ອຮູ້ຫຼືຄວນຮູ້ຂ່າວການເສຍຊີວິດແລ້ວຫາກ

ບໍ່ມາມ້ຽນຄາບສິ່ງສະການຫຼືບໍ່ໄດ້ມອບໝາຍໃຫ້ຄົນອື່ນມາຮ່ວມແທນຕົນໂດຍບໍ່ມີເຫດຜົນ;

4. ຜູ້ທີ່ໄດ້ຂົ່ມຂູ່ເຈົ້າຂອງຊັບໃຫ້ເຮັດ, ຖອນຫຼືປ່ຽນແປງພິໄນກຳທັງໝົດຫຼືສ່ວນໃດສ່ວນໜຶ່ງ;

5. ຜູ້ທີ່ໄດ້ປິດບັງຫຼືຊຸກເຊື່ອງຜູ້ກະທຳຜິດ ຕໍ່ຊີວິດຫຼືສຸຂະພາບຂອງເຈົ້າມູນມໍຣະດົກຊຶ່ງເຮັດໃຫ້ໄດ້ຮັບບາດເຈັບສາຫັດ,ເສຍອົງຄະຫຼື ເສຍຊີວິດ;

6. ຜູ້ທີ່ຖືກສານຕັດສິນວ່າໄດ້ຫາຄວາມບໍ່ຈົງໃສ່ເຈົ້າຂອງຊັບຫຼືໃສ່ຜູ້ມີສິດສືບທອດມູນມໍຣະດົກດ້ວຍກັນຕາມທີ່ໄດ້ກຳນົດໄວ້ໃນປະມວນກົດໝາຍອາຍາ.

ບຸກຄົນທີ່ໄດ້ກ່າວມາເທິງນີ້ຈະເສຍສິດສືບທອດມູນມໍຣະດົກໄດ້ກໍຕໍ່ເມື່ອເຈົ້າຂອງຊັບຫາກໄດ້ສະແດງເຈດຈຳນົງຂອງຕົນອອກເປັນລາຍລັກອັກສອນເທົ່ານັ້ນ, ເວັ້ນເສຍແຕ່ເຈົ້າມູນມໍຣະດົກຫາກໄດ້ເສຍຊີວິດຕາມຂໍ້ 1, 3 ແລະ 5 ຂອງມາດຕານີ້.

ຖ້າບຸກຄົນທີ່ໄດ້ກ່າວມາເທິງນີ້ຫາກໄດ້ປະພຶດຕົນບໍ່ຊອບທຳ, ບໍ່ຍອມຢູ່ໃຕ້ການຄຸ້ມຄອງຂອງພໍ່ແມ່, ບໍ່ໄດ້ເບິ່ງແຍງພໍ່ແມ່ໃນເວລາເຖົ້າແກ່ຫຼືເຈັບເປັນ ທັງທີ່ຕົນມີຄວາມອາດສາມາດຢູ່ແລ້ວກໍຈະຖືວ່າເປັນຜູ້ເສຍສິດສືບທອດມູນມໍຣະດົກແລະຈະໄດ້ປະຕິບັດດັ່ງດຽວກັນກັບມາດຕາ 617 ວັກທີສອງ ຂອງປະມວນກົດໝາຍສະບັບນີ້.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ກ່ຽວກັບ ສາເຫດທີ່ພາໃຫ້ເສຍສິດໃນການສືບທອດມູນມໍຣະດົກຂອງຜູ້ສືບທອດມູນຕາມກົດໝາຍ ແລະ ຜູ້ສືບທອດມູນຕາມພິໄນກຳ ທີ່ໄດ້ກະທຳບໍ່ຖືກຕ້ອງຕາມກົດໝາຍ ຕໍ່ເຈົ້າຂອງມູນມໍຣະດົກ, ຜູ້ສືບທອດອື່ນ ຫຼື ມູນມໍຣະດົກ.
ຕົວຢ່າງ	**ກ** ມີລູກ 3 ຄົນຄື: **ຂ**, **ຄ** ແລະ **ງ**,**ກ** ມີຊັບມູນຄ່າຈຳນວນ 300.000.000 ກີບ **ກໍລະນີ 1: ວັກ 1 ຂໍ້ 1** **ຄ** ທຸບຕີ **ກ** ແລະ **ງ** ເຮັດໃຫ້ພວກກ່ຽວບາດເຈັບສາຫັດເພື່ອຍາດຊິງເອົາຊັບຈຳນວນ 50.000.000 ກີບ ເປັນຊັບຂອງ **ກ** ນັ້ນໄປໃຊ້ໜີ້ສິ້ນການພະນັນທີ່ **ຄ** ສ້າງຂຶ້ນ ແລະ ມີຄຳຕັດສິນຂອງສານວ່າ **ຄ** ມີຄວາມຜິດຖານທຳຮ້າຍຮ່າງກາຍຕາມມາດຕາ 194 ຂອງປະມວນກົດໝາຍອາຍາ ແລະ **ກ** ສະແດງເຈດຈຳນົງເປັນລາຍລັກອັກສອນວ່າ ບໍ່ໃຫ້ **ຄ** ສືບທອດມູນມໍຣະດົກ, **ຄ** ຈະເສຍສິດໃນການສືບທອດມູນມໍຣະດົກຂອງ ກ. **ກໍລະນີ 2: ວັກ 1 ຂໍ້ 2** **ຄ** ຮູ້ວ່າພໍ່ເຮັດພິໄນກຳມອບເງິນໃຫ້ **ຂ** ແລະ **ງ** ຜູ້ລະຈຳນວນ 30.000.000 ກີບ ແຕ່ໃຫ້ຜູ້ກ່ຽວຈຳນວນ 10.000.000 ກີບ ເຮັດໃຫ້ **ຄ** ມີຄວາມບໍ່ພໍໃຈ ຈຶ່ງທຳລາຍພິໄນກຳສະບັບດັ່ງກ່າວທີ່ **ກ** ຮັກສາໄວ້ນັ້ນ ໂດຍ **ຄ** ລັກເອົາພິໄນກຳນັ້ນໄປຈູດຖິ້ມ, ພາຍຫຼັງທີ່ **ກ** ຮູ້ວ່າ **ຄ** ເຈດຕະນາທຳລາຍພິໄນກຳສະບັບດັ່ງກ່າວ, **ກ** ໄດ້ສະແດງເຈດຈຳນົງວ່າບໍ່ໃຫ້ **ຄ** ສືບທອດມູນມໍຣະດົກ, **ຄ** ຈະເສຍສິດໃນການສືບທອດມູນມໍຣະດົກຂອງ **ກ**. **ກໍລະນີ 3: ວັກ 1 ຂໍ້ 3** **ຄ** ອາໃສຢູ່ທີ່ບ້ານ **ຈ**, ເມືອງ **ສ**, ແຂວງ **ຊ**, ສ່ວນ **ກ** ອາໃສຢູ່ນຳ **ງ** ຢູ່ບ້ານ **ດ**, ເມືອງ **ສ**, ແຂວງ **ຊ**, ເມື່ອ **ກ** ເສຍຊີວິດ **ຄ** ຮູ້ຂ່າວແຕ່ບໍ່ໄປຮ່ວມມ້ຽນຄາບສິ່ງ ຫຼື ເຮັດບຸນກົນທານ ແລະ ບໍ່ໄດ້ມອບໃຫ້ໃຜໃນຄອບຄົວໄປຕາງ **ຄ** ແຕ່ຢ່າງໃດ, ສະນັ້ນ **ຄ** ຈຶ່ງເສຍສິດໃນການສືບທອດມູນມໍຣະດົກຂອງ **ກ**. **ກໍລະນີ 4: ວັກ 1 ຂໍ້ 4** **ຄ** ຮູ້ວ່າພໍ່ເຮັດພິໄນກຳມອບເງິນໃຫ້ **ຂ** ແລະ **ງ** ຜູ້ລະຈຳນວນ 30.000.000 ກີບ ແຕ່ໃຫ້ຜູ້ກ່ຽວຈຳນວນ 10.000.000 ກີບ ເຮັດໃຫ້ **ຄ** ມີຄວາມບໍ່ພໍໃຈ ຈຶ່ງຂົ່ມຂູ່ **ກ** ໃຫ້ປ່ຽນແປງພິໄນກຳໃໝ່, ໂດຍໃຫ້ **ກ** ເຮັດພິໄນກຳມອບເງິນໃຫ້ **ຄ** ຈຳນວນ 50.000.000 ກີບ

	ຫຼາຍກວ່າ **ຂ** ແລະ **ງ** ຖ້າບໍ່ເຮັດຈະທຳຮ້າຍຮ່າງກາຍ **ຂ** ແລະ **ງ** ໃຫ້ເສຍອົງຄະ ຫຼື ເສຍຊີວິດ, ພາຍຫຼັງທີ່ **ກ** ຮູ້ວ່າຜູ້ກ່ຽວເຈດຕະນາຂົ່ມຂູ່ຕົນເອງໃຫ້ປ່ຽນແປງພິໄນກຳ, **ກ** ສະແດງເຈດຈຳນົງວ່າບໍ່ໃຫ້ **ຄ** ສືບທອດມູນມໍຣະດົກ **ຄ** ຈະເສຍສິດໃນການສືບທອດມູນມໍຣະດົກຂອງ **ກ**. **ກໍລະນີ 5: ວັກ 1 ຂໍ້ 5** **ຄ**ທຳຮ້າຍຮ່າງກາຍຂອງ **ກ** ຜູ້ເປັນພໍ່ໂດຍເອົາໄມ້ຄ້ອນທຸບຕີທາງດ້ານຫຼັງເຮັດໃຫ້ **ກ** ບາດເຈັບ ແລະ ເສຍອົງຄະ (ບໍ່ສາມາດຍ່າງໄດ້),**ຂ** ຮູ້ເຫັນການກະທຳຂອງ **ຄ** ແຕ່ຜູ້ກ່ຽວປິດບັງບໍ່ບອກໃຫ້ **ກ** ຫຼື ຜູ້ອື່ນຮັບຮູ້, ຜ່ານໄປໄລຍະໜຶ່ງ **ຄ** ໄດ້ມາສາລະພາບວ່າຜູ້ກ່ຽວເປັນຜູ້ທຳຮ້າຍຮ່າງກາຍ **ກ** ໂດຍທີ່ **ຂ** ເປັນຜູ້ເຫັນ ແລະ ຮູ້ການກະທຳທີ່ເກີດຂຶ້ນນັ້ນ, ເມື່ອ **ກ** ສະແດງເຈດຈຳນົງວ່າບໍ່ໃຫ້ **ຂ** ສືບທອດມູນມໍຣະດົກແລ້ວ **ຂ** ຈະເສຍສິດໃນການສືບທອດມູນມໍຣະດົກຕາມມາດຕານີ້. ເພາະວ່າການກະທຳທີ່ **ຂ** ຮູ້ວ່າ **ຄ** ເປັນຜູ້ທຳຮ້າຍຮ່າງກາຍ **ກ** ແຕ່ບໍ່ບອກໃຫ້ **ກ** ຫຼື ຜູ້ອື່ນຮັບຮູ້ນັ້ນ ສາມາດຕີຄວາມວ່າເປັນການກະທຳດັ່ງດຽວກັນກັບ "ການປິດບັງ ຫຼື ຊຸກເຊື່ອງ" ທີ່ກຳນົດໄວ້ໃນວັກ 1 ຂໍ້ 5 ຂອງມາດຕານີ້. **ກໍລະນີ 6: ວັກ 1 ຂໍ້ 6** **ຄ** ປ່າວປະກາດວ່າ **ຂ** ມີເຈດຕະນາທຳຮ້າຍຮ່າງກາຍ **ກ** ເພື່ອຫວັງເອົາຊັບສົມບັດຂອງ **ກ** ທັງໝົດເປັນຂອງຕົນເອງຜູ້ດຽວ, ເຮັດໃຫ້ **ຂ** ເສື່ອມເສຍກຽດສັກສີຢ່າງຮ້າຍແຮງ **ຂ** ຈຶ່ງຮ້ອງຟ້ອງເພື່ອໃຫ້ສານຕັດສິນວ່າ **ຄ** ຫາຄວາມບໍ່ຈິງໃສ່ຕົນເອງ, ຜ່ານການຕັດສິນຂອງສານແລ້ວາ **ຄ** ມີຄວາມຜິດຖານໃສ່ຮ້າຍປ້າຍສີ **ຂ** ແທ້, ຕໍ່ມີ **ກ** ສະແດງເຈດຈຳນົງເປັນລາຍລັກອັກສອນວ່າບໍ່ໃຫ້ **ຄ** ສືບທອດມູນມໍຣະດົກຂອງຕົນ. ສະນັ້ນ, **ຄ** ຈະເສຍສິດໃນການສືບທອດມູນມໍຣະດົກ. **ກໍລະນີ 7: ວັກ 2** ບັນດາພວກລູກຂອງ **ກ** ຫາກປະພຶດຕົວບໍ່ດີ ບໍ່ຟັງຄວາມພໍ່ແມ່ທີ່ໄດ້ສຶກສາອົບຮົມ,ບໍ່ຢູ່ພາຍໃຕ້ການຄຸ້ມຄອງ,ບໍ່ເບິ່ງແຍງພໍ່ແມ່ໃນເວລາເຖົ້າແກ່ສະລາ ຫຼືເວລາທີ່ເຈັບເປັນທັງທີ່ ພວກລູກຂອງ **ກ** ທຸກຄົນຕ່າງກໍມີຄວາມສາມາດຄື: ມີເງິນ, ມີເວລາ ແຕ່ບໍ່ພາກັນປະຕິບັດໜ້າທີ່ເບິ່ງແຍງພໍ່ແມ່ແລ້ວພວກກ່ຽວກໍຈະເສຍສິດໃນການສືບທອດມູນມໍຣະດົກຂອງ **ກ** ເຊັ່ນກັນ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 50 ຂອງກົດໝາຍວ່າດ້ວຍການສືບທອດມູນມໍຣະດົກ ປີ 2008 ການເສຍສິດສືບທອດຕາມກົດໝາຍແລະຕາມພິໄນກຳ ໄດ້ກຳນົດເຈົ້າມູນມໍຣະດົກ ໃນວັກ 1 ຂໍ້ 6 ແລະ ວັກ 2 ນັ້ນ ເຫັນວ່າຜູ້ທີ່ເປັນເຈົ້າຂອງຊັບນັ້ນແມ່ນຍັງບໍ່ທັນໄດ້ເສຍຊີວິດ ປະມວນກົດໝາຍແພ່ງຈຶ່ງປັບປຸງຄຳວ່າ "ເຈົ້າມູນມໍຣະດົກ" ມາເປັນ "ເຈົ້າຂອງຊັບ" ພ້ອມທັງປ່ຽນມາດຕາທີ່ກ່ຽວຂ້ອງທາງອາຍານັ້ນມາເປັນປະມວນກົດໝາຍອາຍາ ໂດຍບໍ່ໄດ້ເຈາະຈົງມາດຕາສະເພາະທັງນີ້ກໍຂຶ້ນກັບເວລາທີ່ມີການກະທຳຜິດນັ້ນສານຈະນຳໃຊ້ມາດຕາໃດຂອງປະມວນກົດໝາຍອາຍາ ເພື່ອຕັດສິນວ່າເປັນການກະທຳຜິດສະຖານໃດ ແລະ ເພື່ອໃຫ້ສອດຄ່ອງກັບປະມວນກົດໝາຍແພ່ງ; ສຳລັບບຸກຄົນທີ່ກ່າວມາຂ້າງເທິງ ໃນວັກທີ 2 ຂອງມາດຕານີ້ ໝາຍເຖິງບຸກຄົນທີ່ກຳນົດຢູ່ໃນຂໍ້ທີ 1 ເຖິງ 6 ຂອງວັກທີ 1 ມາດຕານີ້ ແຕ່ເຫັນວ່າການກະທາຂອງບຸກຄົນຢູ່ໃນຂໍ້ທີ 1, 2, 4,5, ແລະ 6 ຂອງວັກ 1 ມາດຕານີ້ ທີ່ບໍ່ເຮັດໃຫ້ເຈົ້າຊັບເສຍຊີວິດ ເຈົ້າຊັບສາມາດສະແດງເຈດຈຳນົງຂອງຕົນເປັນລາຍລັກອັກສອນ ວ່າບໍ່ໃຫ້ບຸກຄົນເຫຼົ່ານັ້ນສືບທອດມູນມໍຣະດົກຂອງຕົນ ຍົກເວັ້ນ ກໍລະນີທີ່ການກະທຳຂອງບຸກຄົນຢູ່ໃນຂໍ້ທີ 1 ແລະ 5 ຂອງວັກ 1 ມາດຕານີ້ໄດ້ເຮັດໃຫ້ເຈົ້າຊັບເສຍ

	ຊີວິດເຈົ້າຊັບບໍ່ສາມາດສະແດງເຈດຈຳນົງເປັນລາຍລັກອັກສອນໄດ້.ສ່ວນບຸກຄົນ ໃນຂໍ້ທີ 3 ວັກ 1 ຂອງມາດຕານີ້ແມ່ນມີການກະທຳ ພາຍຫຼັງທີ່ເຈົ້າຊັບໄດ້ເສຍ ຊີວິດແລ້ວຊຶ່ງບໍ່ສາມາດສະແດງເຈດຈຳນົງເປັນລາຍລັກອັກສອນໄດ້; ສຳລັບບຸກຄົນທີ່ກ່າວມາຂ້າງເທິງໃນວັກທີ 3 ຂອງມາດຕານີ້ໝາຍເຖິງບຸກຄົນທີ່ ໄດ້ກະທຳສິ່ງຕ່າງໆທີ່ລະບຸໄວ້ໃນວັກນີ້ ເຖິງວ່າຈະບໍ່ກຳນົດຢູ່ໃນຂໍ້ທີ1 ຫາ ຂໍ້ທີ 6 ວັກ 1 ຂອງມາດຕານີ້ກໍຕາມ.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງຂອງປະເທດອື່ນ	ມາດຕາ 1606 ຂໍ້ 1, 4 ແລະ 5 ຂອງປະມວນກົດໝາຍແພ່ງ ແລະ ພານິດໄທ; ມາດຕາ 891, 892 ແລະ 893 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 615 ແລະ 617 ຂອງປະມວນກົດໝາຍແພ່ງ; ໝວດ 3-5 ຂອງປະມວນກົດໝາຍອາຍາ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 619 ການລົບລ້າງການເສຍສິດສືບທອດ

ເຈົ້າມູນມໍຣະດົກອາດລົບລ້າງການເສຍສິດສືບທອດມູນມໍຣະດົກ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 618 ຂອງປະມວນກົດໝາຍສະບັບນີ້ດ້ວຍການສະແດງເຈດຈຳນົງຂອງຕົນໂດຍມີຫຼັກຖານຫຼືພະຍານຢັ້ງຢືນ.

ຈຸດປະສົງ	ເພື່ອກຳນົດການປົກປ້ອງຜູ້ທີ່ເສຍສິດໃນການສືບທອດມູນແລ້ວນັ້ນ ສາມາດ ຖືກລົບລ້າງໄດ້ໂດຍເຈົ້າມູນມໍຣະດົກ.
ຕົວຢ່າງ	**ກ** ມີລູກ 3 ຄົນຄື: **ຂ**, **ຄ** ແລະ **ງ**, **ກ** ມີເງິນຈຳນວນ 300.000.000 ກີບ, **ຄ** ທຸບຕີເຮັດໃຫ້ **ກ** ບາດເຈັບສາຫັດເພື່ອຍາດຊິງເງິນຈຳນວນ 50.000.000 ກີບ ທີ່ເປັນເງິນຂອງ **ກ** ນັ້ນໄປໃຊ້ໜີ້ການພະນັນທີ **ຄ** ສ້າງຂຶ້ນ ແລະ ມີຄຳ ຕັດສິນຂອງສານວ່າ **ຄ** ມີຄວາມຜິດຖານທຳຮ້າຍຮ່າງກາຍຕາມມາດຕາ 194 ຂອງປະມວນກົດໝາຍອາຍາ ແລະ **ກ** ສະແດງເຈດຈຳນົງເປັນລາຍລັກອັກ ສອນວ່າ ບໍ່ໃຫ້ **ຄ** ສືບທອດມູນມໍຣະດົກ **ຄ** ຈະເສຍສິດໃນການສືບທອດ ມູນມໍຣະດົກຂອງ **ກ**, ຕໍ່ມາ **ຄ** ປ່ຽນແປງຕົນເອງໂດຍເອົາໃຈໃສ່ເບິ່ງແຍງ **ກ,** ເຮັດໃຫ້ **ກ** ເຮັດເອກະສານລົບລ້າງການເສຍສິດໃນການສືບທອດມູນມໍຣະ ດົກຂອງ **ຄ** ຊຶ່ງເອກະສານດັ່ງກ່າວແມ່ນມີພະຍານຮັບຮູ້ນຳ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກມາດຕາ 51 ຂອງກົດໝາຍວ່າດ້ວຍການສືບທອດມູນ ມໍຣະດົກ ປີ 2008 ການລົບລ້າງການເສຍສິດສືບທອດ ໂດຍປ່ຽນມາດຕາ ທີ່ກ່ຽວຂ້ອງນັ້ນໃຫ້ສອດຄ່ອງກັບປະມວນກົດໝາຍແພ່ງຄຳວ່າ:"ເຈົ້າມູນມໍຣະ ດົກ" ຕາມມາດຕານີ້ແມ່ນໝາຍເຖິງເຈົ້າຊັບທີ່ໄດ້ສະແດງເຈດລົບລ້າງການເສຍ ສິດການສືບທອດມູນມໍຣະດົກຂອງບຸກຄົນທີ່ກຳນົດໄວ້ໃນມາດຕາ 618 ໃນ ເວລາທີ່ຜູ້ກ່ຽວຍັງມີຊີວິດຢູ່.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງ ຂອງປະເທດອື່ນ	ມາດຕາ 1606 ວັກສຸດທ້າຍ ຂອງປະມວນແພ່ງ ແລະ ພານິດໄທ.
ມາດຕາອ້າງອີງ	ມາດຕາ 618 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ໝວດທີ 5
ການຄຸ້ມຄອງມູນມໍຣະດົກແລະຄວາມຮັບຜິດຊອບຂອງຜູ້ສືບທອດຕໍ່ໜີ້ສິນຂອງເຈົ້າມູນມໍຣະດົກ

ກ. ການຄຸ້ມຄອງມູນມໍຣະດົກ

ມາດຕາ 620 ການຄຸ້ມຄອງມູນມໍຣະດົກ

ເມື່ອມີການຮ້ອງຂໍໃຫ້ຄຸ້ມຄອງມູນມໍຣະດົກຈາກ ຜູ້ມີສິດສືບທອດມູນມໍຣະດົກ, ເຈົ້າໜີ້ ຫຼື ໃນກໍລະນີທີ່ຈຳເປັນນັ້ນ ນາຍບ້ານ ຫຼື ນາຍທະບຽນສານ ບ່ອນເປີດການສືບທອດມູນມໍຣະດົກ ຫຼື ສານ ຕ້ອງວາງມາດຕະການຄຸ້ມຄອງມູນມໍຣະດົກ ຫຼື ແຕ່ງຕັ້ງຜູ້ຄຸ້ມຄອງມູນມໍຣະດົກ ເພື່ອຮັບປະກັນຜົນປະໂຫຍດຂອງບັນດາຜູ້ມີສິດສືບທອດມູນມໍຣະດົກ ຫຼື ເຈົ້າໜີ້.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ວ່າ ນາຍບ້ານ ຫຼື ນາຍທະບຽນສານ ບ່ອນເປີດການສືບທອດມູນມໍຣະດົກ ຫຼື ສານສາມາດວາງມາດຕະການຄຸ້ມຄອງມູນມໍຣະດົກໄດ້.
ຕົວຢ່າງ	**ກ** ມີຊັບສິນບັດມູນຄ່າຈຳນວນ 300.000.000 ກີບ, ມີລູກ 3 ຄົນ ຄື: **ຂ**, **ຄ** ແລະ **ງ**, ມີໜີ້ຕ້ອງສົ່ງໃຫ້ **ຈ** ຈຳນວນ 30.000.000 ກີບ, ວັນທີ 01 ມີນາ 2021 **ກ** ເສຍຊີວິດ, **ຈ** ຜູ້ເປັນເຈົ້າໜີ້ໄດ້ຮ້ອງຂໍຕໍ່ບ້ານບ່ອນທີ່ **ກ** ອາໃສຢູ່ ເພື່ອແຕ່ງຕັ້ງຜູ້ຄຸ້ມຄອງມູນມໍຣະດົກຂອງ **ກ** ໄວ້ເພື່ອໃຊ້ໜີ້ໃຫ້ **ຈ** ກ່ອນທີ່ຈະມີການແບ່ງປັນໃຫ້ບັນດາຜູ້ສືບທອດ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 52 ຂອງກົດໝາຍວ່າດ້ວຍການສືບທອດມູນມໍຣະດົກ ສະບັບປີ 2008 ການຄຸ້ມຄອງມູນມໍຣະດົກກຳນົດວ່າຜູ້ສືບທອດມູນມໍຣະດົກເຫັນວ່າບໍ່ທັນເໝາະສົມເພາະ ບຸກຄົນດັ່ງກ່າວແມ່ນບໍ່ທັນໄດ້ເປັນຜູ້ສືບທອດເທື່ອເປັນພຽງຜູ້ມີສິດສືບທອດເທົ່ານັ້ນ ປະມວນກົດໝາຍແພ່ງ ຈຶ່ງໄດ້ປັບປຸງຄຳວ່າ: “ ຜູ້ສືບທອດ” ມາເປັນ “ຜູ້ມີສິດສືບທອດ”” ແລະ ເພີ່ມຄຳວ່າ: ““ສານ”” ເປັນພາກສ່ວນທີ່ມີສິດພິຈາລະນາກ່ຽວກັບການຮ້ອງຂໍຄຸ້ມຄອງມູນມໍຣະດົກນັ້ນ ລວມທັງມີການປ່ຽນແປງຄຳວ່າ: “ພະນັກງານທະບຽນສານ ”ມາເປັນ “ນາຍທະບຽນສານ” ເພື່ອໃຫ້ມີຄວາມສອດຄ່ອງກັບກົດໝາຍວ່າດ້ວຍທະບຽນສານ. ເຈົ້າໜີ້ໃນມາດຕານີ້ແມ່ນໝາຍເຖິງເຈົ້າໜີ້ທີ່ກ່ຽວພັນກັບເຈົ້າມູນມໍຣະດົກເທົ່ານັ້ນ ສ່ວນເຈົ້າໜີ້ທີ່ກ່ຽວພັນກັບຜູ້ທີ່ມີສິດສືບທອດມູນມໍຣະດົກນັ້ນແມ່ນບໍ່ໄດ້ນອນຢູ່ໃນມາດຕານີ້; ເຈົ້າໜີ້ທີ່ກຳນົດຕາມມາດຕານີ້ແມ່ນຜູ້ທີ່ມີສິດໃນການຮັບການໃຊ້ແທນໜີ້ສິນຂອງຕົນກ່ອນທີ່ຈະແບ່ງປັນມູນມໍຣະດົກ. ສະນັ້ນມາດຕານີ້ໄດ້ເພີ່ມເຈົ້າໜີ້ເພື່ອໃຫ້ມີສິດຮ້ອງຂໍໃຫ້ມີການນຳໃຊ້ມາດຕະການໃນການຄຸ້ມຄອງມູນມໍຣະດົກ ຫຼື ແຕ່ງຕັ້ງຜູ້ຄຸ້ມຄອງມູນມໍຣະດົກ ຊຶ່ງກົດໝາຍວ່າດ້ວຍການສືບທອດມູນມໍຣະດົກ ປີ 2008 ແມ່ນບໍ່ໄດ້ກຳນົດໄວ້.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 918 ແລະ 936 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ ແລະ ກົດໝາຍວ່າດ້ວຍການດຳເນີນຄະດີຄອບຄົວ ຂອງປະເທດຍີ່ປຸ່ນ ມາດຕາ 200 ວັກ 1 (Japanese Law on Domestic Affairs Case Procedures).
ມາດຕາອ້າງອີງ	ມາດຕາ 624 ແລະ 626 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 621 ບຸກຄົນທີ່ບໍ່ມີສິດເປັນຜູ້ຄຸ້ມຄອງມູນມໍຣະດົກ

ບຸກຄົນທີ່ບໍ່ມີສິດເປັນຜູ້ຄຸ້ມຄອງມູນມໍຣະດົກ ມີດັ່ງນີ້:

1. ຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດ;
2. ຜູ້ທີ່ຖືກສານຕັດສິນວ່າເປັນຜູ້ລົ້ມລະລາຍທີ່ຢູ່ໃນໄລຍະຫ້າມ;
3. ຜູ້ທີ່ຖືກສານຕັດສິນປົດສິດໃນການເປັນພໍ່ແມ່ແລະ ຜູ້ເສຍສິດສືບທອດມູນມໍຣະດົກຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ແລະ ມາດຕາ 617 ແລະ 618 ຂອງປະມວນກົດໝາຍສະບັບນີ້.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ຜູ້ທີ່ຈະບໍ່ສິດເປັນຜູ້ຄຸ້ມຄອງມູນມໍຣະດົກໄດ້.
ຕົວຢ່າງ	**ກ** ມີມູນມໍຣະດົກມູນຄ່າຈຳນວນ 300.000.000 ກີບ, ມີລູກ 4 ຄົນ ຄື: **ຂ** 22 ປີ (ເປັນຜູ້ບໍ່ມີຄວາມສາມາດດ້ານການປະພຶດຕາມຄຳຕັດສິນຂອງສານ), **ຄ** ອາຍຸ 15 ປີ, **ງ** ອາຍຸ 30 ປີ (ຖືກສານຕັດສິນໃຫ້ເປັນບຸກຄົນລົ້ມລະລາຍ ແລະ ຢູ່ໃນໄລຍະຫ້າມ) ແລະ **ຈ** ອາຍຸ 27 ປີ (ຖືກສານຕັດສິນປົດສິດຈາກການເປັນລູກຈາກ **ກ** ແລະ ເສຍສິດສືບທອດຕາມກົດໝາຍ), **ກ** ມີໜີ້ຕ້ອງສົ່ງໃຫ້ **ສ** ຈຳນວນ 70.000.000 ກີບ, **ສ** ຜູ້ເປັນເຈົ້າໜີ້ໄດ້ຮ້ອງຂໍຕໍ່ນາຍບ້ານ ຫຼື ນາຍທະບຽນສານ ຫຼື ສານ ໃຫ້ມີການຄຸ້ມຄອງມູນມໍຣະດົກຂອງ **ກ** ເພື່ອຮັບປະກັນການໃຊ້ແທນໜີ້ສິນໃຫ້ຕົນເອງ, ເມື່ອນາຍບ້ານພິຈາລະນາຄຳຮ້ອງ ແລ້ວເຫັນວ່າບັນດາພວກລູກຂອງ **ກ** ແມ່ນເປັນຜູ້ບໍ່ມີສິດໄດ້ຮັບການແຕ່ງຕັ້ງ ຕາມມາດຕານີ້ຍ້ອນວ່າ: 1. **ຂ** ແລະ **ຄ** ແມ່ນເປັນຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດ; 2. **ງ** ເປັນຜູ້ທີ່ຖືກສານຕັດສິນວ່າເປັນຜູ້ລົ້ມລະລາຍທີ່ຢູ່ໃນໄລຍະຫ້າມ; 3. **ສ** ເປັນຜູ້ທີ່ຖືກສານຕັດສິນປົດສິດໃນການເປັນລູກຈາກ **ກ** ແລະເສຍສິດສືບທອດຕາມກົດໝາຍ ດັ່ງນັ້ນ, ຈຶ່ງແຕ່ງຕັ້ງ **ຊ** ທີ່ເປັນນ້ອງຊາຍຂອງ **ກ** ເປັນຜູ້ຄຸ້ມຄອງມູນມໍຣະດົກຂອງ ກ ໄວ້ເພື່ອລໍຖ້າການແບ່ງປັນ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງຈາກມາດຕາ 53 ຂອງກົດໝາຍວ່າດ້ວຍການສືບມູນມໍຣະດົກ ປີ 2008 ບຸກຄົນທີ່ບໍ່ມີສິດເປັນຜູ້ຄຸ້ມຄອງມູນມໍຣະດົກແລະ ໄດ້ກຳນົດບຸກຄົນທີ່ບໍ່ມີສິດເປັນຜູ້ຄຸ້ມຄອງມູນມໍຣະດົກແມ່ນມີຜູ້ທີ່ບໍ່ທັນເຖິງກະສຽນອາຍຸ ສິບແປດປີ ແລະ ຜູ້ທີ່ເປັນບ້າເສຍຈິດ ເປັນຂໍ້ແຍກຈາກກັນ ຊຶ່ງບຸກຄົນທັງສອງນີ້ແມ່ນເປັນບຸກຄົນທີ່ບໍ່ມີຄວາມສາມາດທາງດ້ານການປະພຶດ ປະມວນກົດໝາຍແພ່ງຈຶ່ງປັບປຸງ ຄຳວ່າ:"ຜູ້ທີ່ຍັງບໍ່ທັນເຖິງກະສຽນອາຍຸ ສິບແປດປີ ແລະ ຜູ້ທີ່ເປັນບ້າເສຍຈິດ" ມາເປັນ"ຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດ" ເພື່ອໃຫ້ມັນກະທັດຮັດຂຶ້ນຕື່ມ ແລະ ເຂົ້າໃຈງ່າຍ ພ້ອມທັງປ່ຽນມາດຕາທີ່ກ່ຽວຂ້ອງນັ້ນໃຫ້ສອດຄ່ອງກັບປະມວນກົດໝາຍແພ່ງ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 1718 ຂອງປະມວນແພ່ງ ແລະ ພານິດໄທ; ມາດຕາ 918, 936 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ; ໃນກົດໝາຍຂອງອັງກິດ, ຂັ້ນຕອນຂອງການສືບທອດມູນມໍຣະດົກແມ່ນປະຕິບັດໂດຍຜູ້ປະຕິບັດພິໄນກຳ ໃນກໍລະນີຂອງການສືບທອດມູນມໍຣະດົກຕາມພິໄນກຳ ຫຼືໂດຍຜູ້ຄຸ້ມຄອງມູນມໍຣະດົກ ໃນກໍລະນີຂອງການສືບທອດມູນມໍຣະດົກຕາມກົດໝາຍ. ຄ້າຍຄືກັນກັບໜຶ່ງໃນກົດໝາຍເຊັ່ນ: ເສຍຊີວິດ→ຜູ້ປະຕິບັດພິໄນກຳ→ການຊຳລະໜີ້→ການແບ່ງປັນມູນມໍຣະດົກ.

ມາດຕາອ້າງອີງ	ມາດຕາ 53 ກົດໝາຍວ່າດ້ວຍການຟື້ນຟູ ແລະ ການລົ້ມລະລາຍຂອງວິສະຫະກິດ; ມາດຕາ 68, 617 ແລະ 618 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ	ສືບຕໍ່ຄົ້ນຄວ້າ.

ມາດຕາ 622 ສິດ ແລະ ໜ້າທີ່ຂອງຜູ້ຄຸ້ມຄອງມູນມໍຣະດົກ

ຜູ້ຄຸ້ມຄອງມູນມໍຣະດົກ ມີສິດແລະໜ້າທີ່ດັ່ງນີ້:

1. ເຮັດບັນຊີມູນມໍຣະດົກໂດຍຊ້ອງໜ້າຜູ້ມີສິດສືບທອດມູນມໍຣະດົກທຸກຄົນ. ໃນກໍລະນີທີ່ມີຜູ້ມີສິດສືບທອດມູນມໍຣະດົກຜູ້ໃດໜຶ່ງບໍ່ສາມາດມາຮ່ວມໄດ້ກໍຕ້ອງແຈ້ງໃຫ້ຜູ້ຄຸ້ມຄອງມູນມໍຣະດົກຊາບ, ການເຮັດບັນຊີມູນມໍຣະດົກ ໂດຍຊ້ອງໜ້າຜູ້ມີສິດສືບທອດມູນມໍຣະດົກນັ້ນຢ່າງໜ້ອຍບໍ່ໃຫ້ຫຼຸດສອງສ່ວນສາມຂອງຈຳນວນຜູ້ມີສິດສືບທອດມູນມໍຣະດົກທັງໝົດໂດຍເຮັດໃຫ້ແລ້ວພາຍໃນເວລາ ໜຶ່ງເດືອນນັບແຕ່ວັນທີ່ຜູ້ຄຸ້ມຄອງໄດ້ຮັບການແຕ່ງຕັ້ງເປັນຕົ້ນໄປ;

2. ຮັບຄຳຮ້ອງຂອງເຈົ້າໜີ້ແລະ ຊຳລະໜີ້ສິນຂອງເຈົ້າມູນມໍຣະດົກກ່ອນຜູ້ມີສິດສືບທອດຈະຮັບເອົາມູນມໍຣະດົກ;

3. ແບ່ງປັນມູນມໍຣະດົກໃຫ້ບັນດາຜູ້ມີສິດສືບທອດມູນມໍຣະດົກຕາມພູດຂອງແຕ່ລະຄົນ.

ຜູ້ຄຸ້ມຄອງມູນມໍຣະດົກບໍ່ມີສິດທວງເອົາບຳເນັດໃນການຄຸ້ມຄອງມູນມໍຣະດົກ,ເວັ້ນເສຍແຕ່ຜູ້ສືບທອດມູນມໍຣະດົກຫາກເຫັນດີມອບໃຫ້ເທົ່ານັ້ນ.

ຈຸດປະສົງ	ເພື່ອກຳນົດຂອບເຂດສິດ ແລະ ໜ້າທີ່ຂອງຜູ້ຄຸ້ມຄອງມູນມໍຣະດົກທີ່ໄດ້ຮັບການແຕ່ງຕັ້ງ.
ຕົວຢ່າງ	**ກ** ມີມູນມໍຣະດົກມູນຄ່າຈຳນວນ 300.000.000 ກີບ, ມີລູກ 3 ຄົນ ຄື: **ຂ**, **ຄ** ແລະ **ງ** ໜີ້ຕ້ອງສົ່ງໃຫ້ **ຈ** ຈຳນວນ 30.000.000 ກີບ, ພາຍຫຼັງ **ກ** ເສຍຊີວິດ, **ຈ** ເຈົ້າໜີ້ຈຶ່ງຮ້ອງຂໍຕໍ່ອົງການປົກຄອງບ້ານບ່ອນທີ່ **ກ** ອາໃສຢູ່ເພື່ອຂໍໃຫ້ມີການຄຸ້ມຄອງມູນມໍຣະດົກຂອງ **ກ** ໄວ້, ນາຍບ້ານ ໄດ້ແຕ່ງຕັ້ງ **ສ** ນ້ອງຊາຍຂອງ **ກ** ເປັນຜູ້ຄຸ້ມຄອງມູນມໍຣະດົກດັ່ງກ່າວ, ສ ແມ່ນມີໜ້າທີ່ຄື: 1. ເຮັດບັນຊີມູນມໍຣະດົກຂອງ **ກ** ປະກອບມີ: ຊັບສົມບັດທັງໝົດຈຳນວນ 300.000.000 ກີບ, ໜີ້ຕ້ອງສົ່ງໃຫ້ **ຈ** ຈຳນວນ 30.000.000 ກີບ, ຄ່າໃຊ້ຈ່າຍໃນການມ້ຽນຄາບສົ່ງສະການຂອງ **ກ** ຈຳນວນ 40.000.000 ກີບ ໂດຍຊ້ອງໜ້າຜູ້ມີສືບທອດມູນມໍຣະດົກຢ່າງໜ້ອຍສອງສ່ວນສາມ, ຖ້າຜູ້ສືບທອດຫາກບໍ່ສາມາດເຂົ້າຮ່ວມໄດ້ ຕ້ອງແຈ້ງໃຫ້ຜູ້ຄຸ້ມຄອງມູນມໍຣະດົກຊາບ, ຜູ້ສືບທອດມູນມໍຣະດົກຫາກບໍ່ສາມາດເຂົ້າຮ່ວມໄດ້ຫຼາຍກວ່າຈຳນວນຜູ້ທີ່ເຂົ້າຮ່ວມແລ້ວຜູ້ຄຸ້ມຄອງມູນມໍຣະດົກຕ້ອງເລື່ອນການເຮັດບັນຊີດັ່ງກ່າວອອກໄປ. ການເຮັດບັນຊີມູນມໍຣະດົກຕ້ອງເຮັດໃຫ້ແລ້ວພາຍໃນກຳນົດໜຶ່ງເດືອນນັບແຕ່ມື້ທີ່ໄດ້ຮັບການແຕ່ງຕັ້ງ. 2. ຮັບຄຳຮ້ອງຂອງ **ຈ** ຜູ້ເປັນເຈົ້າໜີ້, ກວດກາ ແລະ ຊຳລະໜີ້ໃຫ້ແກ່ **ຈ** ຈຳນວນ 30.000.000 ກີບ ກ່ອນທີ່ຈະແບ່ງປັນມູນມໍຣະດົກ. 3. ແບ່ງປັນມູນມໍຣະດົກທີ່ຍັງເຫຼືອ ຈຳນວນ 230.000.000 ກີບ ຕາມຕົວຈິງນັ້ນແກ່ຜູ້ສືບທອດມູນມໍຣະດົກແຕ່ລະຄົນ. **ສ** ແມ່ນບໍ່ມີສິດທວງເອົາບຳເນັດໃນການຄຸ້ມຄອງມູນມໍຣະດົກ ແຕ່ຖ້າຫາກວ່າບັນດາຜູ້ສືບທອດຫາກເຫັນດີມອບໃຫ້ນັ້ນ **ສ** ກໍຈະໄດ້ຮັບຄ່າຕອບແທນດັ່ງກ່າວ.

ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກມາດຕາ 54 ຂອງກົດໝາຍວ່າດ້ວຍການສືບທອດມູນມໍຣະດົກ ປີ 2008 ສິດ ແລະ ໜ້າທີ່ຂອງຜູ້ຄຸ້ມຄອງມູນມໍຣະດົກກຳນົດວ່າຜູ້ສືບທອດມູນມໍຣະດົກ ເຫັນວ່າບໍ່ທັນເໝາະສົມເພາະ ບຸກຄົນດັ່ງກ່າວແມ່ນບໍ່ທັນໄດ້ເປັນຜູ້ສືບທອດເທື່ອເປັນພຽງຜູ້ມີສິດສືບທອດເທົ່ານັ້ນ ປະມວນກົດໝາຍແພ່ງ ຈຶ່ງປັບປຸງຄຳວ່າ: “ ຜູ້ສືບທອດ” ມາເປັນ “ຜູ້ມີສິດສືບທອດ”
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 617 ແລະ 618 ຂອງປະມວນກົດໝາຍແພ່ງ ຫວຽດນາມ; ມາດຕາ 1721, ແລະ 1729 ຂອງປະມວນກົດໝາຍແພ່ງ ແລະ ພານິດໄທ; ມາດຕາ 936 ວັກ 2, 1011 ແລະ 924 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 570 ແລະ 607 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ	ສືບຕໍ່ຄົ້ນຄວ້າ

ມາດຕາ 623 ການຄຸ້ມຄອງມູນມໍຣະດົກຂອງຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດ

ການຄຸ້ມຄອງມູນມໍຣະດົກຂອງຜູ້ທີ່ບໍ່ມີຄວາມສາມາດທາງດ້ານການປະພຶດຕາມພິໄນກຳ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນມາດຕາ 599 ຂອງປະມວນກົດໝາຍສະບັບນີ້.

ສຳລັບການຄຸ້ມຄອງຊັບສົມບັດຂອງຜູ້ທີ່ບໍ່ມີຄວາມສາມາດທາງດ້ານການປະພຶດທີ່ໄດ້ຮັບຈາກການສືບທອດມູນມໍຣະດົກຕາມກົດໝາຍຫຼືບໍ່ໄດ້ກຳນົດໄວ້ໃນພິໄນກຳນັ້ນ ໃຫ້ ພໍ່, ແມ່ຫຼື ຜູ້ປົກຄອງເປັນຜູ້ຄຸ້ມຄອງຊັບສົມບັດຂອງຜູ້ກ່ຽວ.

ສິດຂອງຜູ້ຄຸ້ມຄອງມູນມໍຣະດົກຈະສິ້ນສຸດລົງ ເມື່ອເດັກນັ້ນຫາກພົ້ນກະສຽນອາຍຸສິບແປດປີຫຼືຜູ້ເປັນບ້າເສຍຈິດ ຫາກໄດ້ກັບຄືນສູ່ສະພາບປົກກະຕິແລ້ວ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ວ່າ ຜູ້ໃດທີ່ຈະເປັນຜູ້ຄຸ້ມຄອງມູນມໍຣະດົກ ໃນກໍລະນີທີ່ຜູ້ສືບທອດມູນມໍຣະດົກຕາມກົດໝາຍ ແລະ ຕາມພິໄນກຳເປັນຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດ.
ຕົວຢ່າງ	**ກ** ແລະ **ຂ** ມີສິນສົມສ້າງຈຳນວນ 300.000.000 ກີບ, **ກ** ແລະ **ຂ** ມີລູກ 2 ຄົນຄື: **ຄ** ອາຍຸ 20 ປີ (ເປັນຜູ້ບໍ່ມີຄວາມສາມາດຕາມຄຳຕັດສິນຂອງສານ) ແລະ **ງ** ອາຍຸ 16 ປີ, ວັນທີ 12 ເມສາ 2021 **ກ** ເຮັດພິໄນກຳມອບເງິນຈຳນວນ 10.000.000 ກີບ ໃຫ້ **ງ** ກຳນົດໃຫ້ **ຈ** (ນ້ອງສາວຂອງ **ກ**) ເປັນຜູ້ຄຸ້ມຄອງມູນມໍຣະດົກໄວ້, ວັນທີ 20 ພະຈິກ 2021**ກ** ເສຍຊີວິດ ແລະ ມີການເປີດການສືບທອດມູນມໍຣະດົກ, ມູນມໍຣະດົກຂອງ **ກ** ຈະຖືກແບ່ງປັນກັນຄືດັ່ງນີ້: ສິນສົມສ້າງຈຳນວນ 300.000.000 ກີບ ແບ່ງເປັນ 02 ພູດສະເໝີກັນໃຫ້ **ກ** ໜຶ່ງພູດ ແລະ **ຂ** ໜຶ່ງພູດ, ພູດຂອງ **ກ** ແມ່ນໃຫ້ນຳມາແບ່ງປັນພິໄນກຳທີ່ **ກ** ມອບໃຫ້ **ງ** ຈຳນວນ 10.000.000 ກີບ ໂດຍ **ຈ** ຄຸ້ມຄອງໄວ້ໃຫ້ **ງ** ຈົນກວ່າຈະພົ້ນອາຍຸກະສຽນ, ສ່ວນຍັງເຫຼືອຂອງ **ກ** ມອບໃຫ້ **ຄ** ແລະ **ງ** ຜູ້ສືບທອດຂອງ **ກ** ສືບທອດຕາມກົດໝາຍ ແຕ່ເນື່ອງຈາກວ່າ **ຄ** ແລະ **ງ** ຍັງບໍ່ມີຄວາມສາມາດດ້ານການປະພຶດຈຶ່ງໃຫ້ **ຂ** ຜູ້ເປັນແມ່ຄຸ້ມຄອງພູດທີ່ແບ່ງປັນນັ້ນໄວ້, ເມື່ອ **ງ** ຮອດອາຍຸຮອດ 18 ປີແລ້ວສິດຂອງຜູ້ຄຸ້ມຄອງມູນມໍຣະດົກບໍ່ວ່າຈະເປັນ **ຂ** (ຜູ້ເປັນແມ່) ແລະ **ຈ** (ຜູ້ຄຸ້ມຄອງທີ່ຖືກກຳນົດຕາມພິໄນກຳ) ຈະສິ້ນສຸດລົງ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກມາດຕາ 32 ຂອງກົດໝາຍວ່າດ້ວຍການສືບທອດມູນມໍຣະດົກ ປີ 2008ການຄຸ້ມຄອງມູນມໍຣະດົກຂອງຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດປະມວນກົດໝາຍແພ່ງໄດ້ປັບປຸງ ວັກ1 ແລະ 2 ຂອງມາດຕານີ້ເປັນການກຳນົດເນື້ອໃນຂຶ້ນມາໃໝ່ ໂດຍວັກ 1 ແມ່ນວິທີການປະຕິບັດການຄຸ້ມຄອງມູນມໍຣະດົກຂອງຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດຕາມທີ່ໄດ້ຕາມພິໄນກຳ ແລະ ວັກ 2ແມ່ນວິທີການປະຕິບັດການຄຸ້ມຄອງມູນມໍຣະດົກກົດໝາຍ. ສ່ວນວັກທີ 3 ແມ່ນນຳມາຈາກວັກທີ 3 ຂອງມາດຕາ 32 ຂອງກົດໝາຍວ່າດ້ວຍການສືບທອດມູນມໍຣະດົກ ສະບັບປີ 2008, ສ່ວນ ວັກ 1 ແລະ 2

	ຂອງມາດຕາ 32 ຂອງກົດໝາຍວ່າດ້ວຍການສືບທອດມູນມໍຣະດົກ ປີ 2008 ແມ່ນນຳໄປປັງປຸງຢູ່ມາດຕາ 599 ຂອງປະມວນກົດໝາຍແພ່ງ; ຜູ້ຄຸ້ມຄອງມູນມໍຣະດົກໃນມາດຕານີ້ບໍ່ແມ່ນຜູ້ຄຸ້ມຄອງມູນມໍຣະດົກທັງໝົດ ແຕ່ແມ່ນຜູ້ຄຸ້ມຄອງມູນມໍຣະດົກຂອງຜູ້ທີ່ບໍ່ມີຄວາມສາມາດທາງດ້ານການປະພຶດໂດຍຈະຂຶ້ນກັບແຕ່ລະກໍລະນີເຊັ່ນ: ຜູ້ໜຶ່ງກໍຈະຄຸ້ມຄອງໃຫ້ຈົນຜູ້ສືບທອດພົ້ນກະສຽນອາຍຸ ແລະ ອີກຜູ້ໜຶ່ງຈະປະຕິບັດໜ້າທີ່ໃນຖານະເປັນຜູ້ຄຸ້ມຄອງມູນມໍຣະດົກຈົນກວ່າຜູ້ສືບທອດກັບຄືນສູ່ສະພາບປົກກະຕິ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ.
ມາດຕາອ້າງອີງ	ມາດຕາ 68, 219 ວັກ 2 ແລະ 599 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ	ສືບຕໍ່ຄົ້ນຄວ້າ.

ມາດຕາ 624 ການລົບລ້າງ, ປ່ຽນແປງການຄຸ້ມຄອງມູນມໍຣະດົກ

ຜູ້ມີສິດສືບທອດມູນມໍຣະດົກ ມີສິດຮ້ອງຂໍຕໍ່ສານ ເພື່ອພິຈາລະນາ ລົບລ້າງ ຫຼື ປ່ຽນແປງມາດຕະການຄຸ້ມຄອງມູນມໍຣະດົກ ຖ້າມາດຕະການຄຸ້ມຄອງມູນມໍຣະດົກ ທີ່ນາຍທະບຽນສານ ຫຼື ນາຍບ້ານວາງອອກນັ້ນຫາກບໍ່ສອດຄ່ອງກັບສະພາບຄວາມເປັນຈິງ ຫຼື ຂັດກັບກົດໝາຍ ແລະ ລະບຽບການ.

ຜູ້ມີສິດສືບທອດມູນມໍຣະດົກ ມີສິດຮ້ອງຂໍຕໍ່ສານ ເພື່ອພິຈາລະນາລົບລ້າງການແຕ່ງຕັ້ງຜູ້ຄຸ້ມຄອງມູນມໍຣະດົກແລ້ວສະເໜີແຕ່ງຕັ້ງຜູ້ຄຸ້ມຄອງຜູ້ໃໝ່ແທນ ຖ້າຜູ້ຄຸ້ມຄອງມູນມໍຣະດົກນັ້ນຫາກບໍ່ໄດ້ປະຕິບັດຕາມສິດແລະໜ້າທີ່ຂອງຕົນຫຼືບໍ່ໄດ້ເອົາໃຈໃສ່ເທົ່າທີ່ຄວນ ຫຼື ປະຕິບັດໂດຍບໍ່ມີຄວາມບໍລິສຸດໃຈ.

ຈຸດປະສົງ	ເພື່ອກຳນົດກ່ຽວກັບ ການດຳເນີນໃນກໍລະນີທີ່ມີຄວາມຈຳເປັນຈະຕ້ອງລົບລ້າງ ຫຼື ປ່ຽນແປງຜູ້ຄຸ້ມຄອງມູນມໍຣະດົກພາຍຫຼັງມີມາດຕະການບັງຄັບກ່ຽວກັບການຄຸ້ມຄອງແລ້ວ ຫຼື ມີການແຕ່ງຕັ້ງຜູ້ຄຸ້ມຄອງມູນມໍຣະດົກແລ້ວ.
ຕົວຢ່າງ	**1. ກ** ມີຊັບສົມບັດມູນຄ່າ ຈຳນວນ 400.000.000 ກີບ, ມີລູກ 4 ຄົນ ຄື: **ຂ**, **ຄ**, **ງ** ແລະ **ຈ**, ໜີ້ຕ້ອງສົ່ງໃຫ້ **ສ** ຈຳນວນ 50.000.000 ກີບ, ພາຍຫຼັງ **ກ** ເສຍຊີວິດ, **ສ** ເຈົ້າໜີ້ໄດ້ຮ້ອງຂໍຕໍ່ອົງການປົກຄອງບ້ານ ຫຼື ຫ້ອງການທະບຽນສານ ບ່ອນທີ່ **ກ** ອາໃສຢູ່ເພື່ອຂໍໃຫ້ມີການຄຸ້ມຄອງມູນມໍຣະດົກຂອງ **ກ** ໄວ້. **ກໍລະນີທີ1.** ນາຍບ້ານຫຼືນາຍທະບຽນສານ ໄນຳໃຊ້ມາດຕະການຄຸ້ມຄອງມູນມໍຣະດົກໂດຍ ຫ້າມບໍ່ໃຫ້ພວກລູກໆຂອງ **ກ** ນຳໃຊ້ເງິນຂອງ **ກ** ເຂົ້າໃນການມ້ຽນຄາບສົ່ງສະການຂອງຜູ້ກ່ຽວ **ຄ**, **ງ** ແລະ **ຈ** ນັ້ນແມ່ນບໍ່ສາມາດຈ່າຍໄດ້. ສະນັ້ນ, **ຄ**, **ງ** ແລະ **ຈ** ຈຶ່ງຮ້ອງຂໍຕໍ່ສານໃຫ້ ປ່ຽນແປງມາດຕະການຄຸ້ມຄອງມູນມໍຣະດົກດັ່ງກ່າວນັ້ນ ເພາະວ່າ ມາດຕະການດັ່ງກ່າວບໍ່ສອດຄ່ອງກັບສະພາບຄວາມເປັນຈິງ **ກໍລະນີທີ 2.** ນາຍບ້ານ ຫຼື ນາຍທະບຽນສານ ແຕ່ງຕັ້ງ **ງ** ເປັນຜູ້ຄຸ້ມຄອງມູນມໍຣະດົກຂອງ **ກ** ຢ່າງຖືກຕ້ອງແຕ່ **ງ** ບໍ່ປະຕິບັດຕາມສິດ ແລະ ໜ້າທີ່ຂອງຜູ້ຄຸ້ມຄອງມູນມໍຣະດົກເປັນຕົ້ນແມ່ນການເຮັດບັນຊີມູນມໍຣະດົກບໍ່ຊ້ອງໜ້າຜູ້ສືບທອດມູນມໍຣະດົກ ແລະ ປະຕິເສດຄຳຮ້ອງຂໍຂອງ **ສ** ເຈົ້າໜີ້ ລວມໄປເຖິງບໍ່ຊຳລະໜີ້ສິນຂອງເຈົ້າມູນມໍຣະດົກແກ່ **ສ.** ສະນັ້ນ, **ຂ**, **ຄ** ແລະ **ຈ** ຈຶ່ງຮ້ອງຂໍຕໍ່ສານເພື່ອໃຫ້ ລົບລ້າງການແຕ່ງຕັ້ງ **ງ** ເປັນຜູ້ຄຸ້ມຄອງມູນມໍຣະດົກດັ່ງກ່າວນັ້ນ ເພາະວ່າ **ງ** ບໍ່ປະຕິບັດຕາມສິດໜ້າທີ່ໃນການເປັນຜູ້ຄຸ້ມຄອງມູນມໍຣະດົກ ແລະ ສະເໜີໃຫ້ສານແຕ່ງຕັ້ງຜູ້ຄຸ້ມຄອງມູນມໍຣະດົກຜູ້ໃໝ່ແທນ.

	2. ກ ມີຊັບສົມບັດມູນຄ່າຈຳນວນ 300.000.000 ກີບ, ມີລູກ 3 ຄົນ ຄື: **ຂ**, **ຄ** ແລະ **ງ** ມີໜີ້ຕ້ອງສົ່ງໃຫ້ **ຈ** ຈຳນວນ 30.000.000 ກີບ, ວັນທີ 1 ມີນາ 2021 **ກ** ເສຍຊີວິດ, **ຂ** ຈຶ່ງຮ້ອງຂໍຕໍ່ບ້ານບ່ອນທີ່ **ກ** ອາໄສຢູ່ເພື່ອແຕ່ງຕັ້ງຜູ້ຄຸ້ມຄອງມູນມໍຣະດົກຂອງ **ກ**, ນາຍບ້ານແຕ່ງຕັ້ງໃຫ້ **ສ** (ນ້ອງຊາຍຂອງ **ກ**) ເປັນຜູ້ຄຸ້ມຄອງມູນມໍຣະດົກ ແຕ່ **ສ** ພັດບໍ່ປະຕິບັດ ສິດ ແລະ ໜ້າທີ່ຂອງຕົນ ຕາມມາດຕາ 622 ຂອງປະມວນກົດໝາຍແພ່ງ ສະແດງອອກບໍ່ເຮັດບັນຊີ ແລະ ບໍ່ຮັບຄຳຮ້ອງຂອງ **ຈ** ທີ່ເປັນເຈົ້າໜີ້, ຕົກມາວັນທີ 2 ສິງຫາ 2021 **ຂ**, **ຄ** ແລະ **ງ** ຈຶ່ງຮ້ອງຂໍຕໍ່ສານເພື່ອລົບລ້າງການແຕ່ງຕັ້ງດັ່ງກ່າວນັ້ນຖິ້ມ ແລ້ວສະເໜີໃຫ້ແຕ່ງຕັ້ງຜູ້ຄຸ້ມຄອງມູນມໍຣະດົກຜູ້ໃໝ່ແທນທີ່ **ສ**.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກມາດຕາ 55 ຂອງກົດໝາຍວ່າດ້ວຍການສືບທອດມູນມໍຣະດົກ ປີ 2008 ການລົບລ້າງການແຕ່ງຕັ້ງຜູ້ຄຸ້ມຄອງມູນມໍຣະດົກ ແມ່ນ ກຳນົດໃຫ້ນາຍບ້ານ ຫຼື ນາຍທະບຽນສານເປັນຜູ້ມີສິດໃນການລົບລ້າງການແຕ່ງຕັ້ງຜູ້ຄຸ້ມຄອງມູນມໍຣະດົກ ເຫັນວ່າບໍ່ທັນມີຄວາມເໝາະສົມປະມວນກົດໝາຍແພ່ງ ໄດ້ປັບປຸງ ຫົວຂໍ້ມາດຕາປ່ຽນຈາກ "ການລົບລ້າງການແຕ່ງຕັ້ງຜູ້ຄຸ້ມຄອງມູນມໍຣະດົກ"ມາເປັນ "ການລົບລ້າງ, ປ່ຽນແປງ ການຄຸ້ມຄອງມູນມໍຣະດົກ". ດ້ານເນື້ອໃນຂອງມາດຕາແມ່ນໄດ້ ກຳນົດ ໃຫ້ສານເທົ່ານັ້ນທີ່ມີສິດອຳນາດໃນການ ລົບລ້າງ ຫຼື ປ່ຽນແປງ ມາດຕະການຄຸ້ມຄອງມູນມໍຣະດົກທີ່ນາຍບ້ານ ຫຼື ນາຍທະບຽນສານ ວາງອອກໂດຍບໍ່ຖືກຕາມສະພາບການຕົວຈິງ ຫຼື ກົດໝາຍ ພ້ອມທັງ ລົບລ້າງການແຕ່ງຕັ້ງ ແລະ ແຕ່ງຕັ້ງຜູ້ຄຸ້ມຄອງມູນມໍຣະດົກໃໝ່ແທນ ຕາມການສະເໜີຂອງຜູ້ສືບທອດມູນມໍຣະດົກ,ການກຳນົດໃຫ້ສານເທົ່ານັ້ນເປັນຜູ້ລົບລ້າງ ຫຼື ປ່ຽນແປງ ທັງນີ້ກໍຍ້ອນວ່າມາດຕາ 620 ຂອງປະມວນກົດໝາຍແພ່ງ ກຳນົດໃຫ້ນາຍບ້ານ ຫຼື ນາຍບຽນສານເປັນຜູ້ແຕ່ງຕັ້ງແລ້ວ ແລະ ອີກຢ່າງໜຶ່ງ ສານກໍແມ່ນມີພາລະບົດບາດໃນການພິຈາລະນາຄຳຮ້ອງຂໍຂອງປະຊາຊົນ ກໍລະນີຜູ້ຄຸ້ມຄອງມູນມໍຣະດົກຂອງຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດ ແມ່ນ ພໍ່, ແມ່, ຜູ້ປົກຄອງ, ຍາດພີ່ນ້ອງ, ນາຍບ້ານ ຫຼື ນາຍທະບຽນສານ ຫຼື ອົງການໄອຍະການປະຊາຊົນ ເປັນຜູ້ຮ້ອງຂໍຕໍ່ສານເພື່ອ ເປັນການປົກປ້ອງ ສິດ ແລະ ຜົນປະໂຫຍດຂອງຜູ້ສືບທອດມູນມໍຣະດົກທີ່ບໍ່ມີຄວາມສາມາດທາງດ້ານການປະພຶດ.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງຂອງປະເທດອື່ນ	ມາດຕາ 651 ແລະ 1019 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 620 ແລະ 622 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ	ສືບຕໍ່ຄົ້ນຄວ້າ.

ຂ. ຄວາມຮັບຜິດຊອບຂອງຜູ້ສືບທອດຕໍ່ໜີ້ສິນຂອງເຈົ້າມູນມໍຣະດົກ

ມາດຕາ 625 ການຊຳລະໜີ້ສິນ

ຜູ້ສືບທອດມູນມໍຣະດົກຕາມກົດໝາຍຫຼືຕາມພິນັຍກຳ ຕ້ອງຮັບຜິດຊອບຊຳລະໜີ້ສິນຂອງເຈົ້າມູນມໍຣະດົກ ບໍ່ໃຫ້ເກີນພູດມູນມໍຣະດົກທີ່ຕົນໄດ້ຮັບ.

ຖ້າມູນມໍຣະດົກຫາກຍັງບໍ່ທັນໄດ້ແບ່ງປັນເຈົ້າໜີ້ກໍມີສິດສະເໜີໃຫ້ຜູ້ມີສິດສືບທອດມູນມໍຣະດົກຫຼືຜູ້ຄຸ້ມຄອງມູນມໍຣະດົກນັ້ນຊຳລະໜີ້ສິນໃຫ້ຕົນທັງໝົດ.

ຖ້າມູນມໍຣະດົກຫາກໄດ້ແບ່ງປັນກັນໝົດແລ້ວເຈົ້າໜີ້ອາດສະເໜີໃຫ້ຜູ້ສືບທອດມູນມໍຣະດົກຜູ້ໃດ

ໜີ້ງຊຳລະໜີ້ສິນໃຫ້ຕົນກໍໄດ້. ໃນກໍລະນີທີ່ຜູ້ສືບທອດມູນມໍຣະດົກຜູ້ໃດໜຶ່ງຫາກໄດ້ຊຳລະໜີ້ສິນໃຫ້ແກ່ເຈົ້າໜີ້ເກີນກວ່າສ່ວນທີ່ຕົນຈະຕ້ອງຊຳລະແລ້ວ,ຜູ້ສືບທອດມູນມໍຣະດົກຜູ້ອື່ນກໍຕ້ອງສະເລ່ຍການທົດແທນຄ່າຊຳລະໜີ້ສິນນັ້ນຄືນໃຫ້ຜູ້ກ່ຽວ.

ຖ້າຜູ້ສືບທອດມູນມໍຣະດົກຜູ້ໃດໜຶ່ງຫາກຕົກຢູ່ໃນສະພາບທີ່ບໍ່ສາມາດຊຳລະໜີ້ສິນຕາມພູດຂອງຕົນໄດ້ນັ້ນ,ຜູ້ສືບທອດມູນມໍຣະດົກຜູ້ອື່ນຕ້ອງຮັບຜິດຊອບສະເລ່ຍໃຊ້ໜີ້ສິນແທນຜູ້ກ່ຽວໃຫ້ເຈົ້າໜີ້.

ການຊຳລະໜີ້ສິນຂອງເຈົ້າມູນມໍຣະດົກໃຫ້ຄິດໄລ່ເອົາແຕ່ໃນຊັບສົມບັດທີ່ເປັນມູນມໍຣະດົກເທົ່ານັ້ນ.

ຈຸດປະສົງ	ເພື່ອກຳນົດກ່ຽວກັບ ຄວາມຮັບຜິດຊອບຂອງຜູ້ສືບທອດມູນມໍຣະດົກກ່ຽວກັບໜີ້ສິນທີ່ລວມຢູ່ໃນມູນມໍຣະດົກ (ໃນກໍລະນີທີ່ມີການຄຸ້ມຄອງມູນມໍຣະດົກແບບບັງຄັບ ຫຼື ມີການແຕ່ງຕັ້ງຜູ້ຄຸ້ມຄອງມູນມໍຣະດົກແລ້ວ). ກໍລະນີໜີ້ສິນລວມຢູ່ໃນມູນມໍຣະດົກ ຕາມຫຼັກການແລ້ວແມ່ນຈະຊຳລະໜີ້ສິນຈາກມູນມໍຣະດົກ ແລະ ໄລ່ລຽງຈົນແລ້ວເສຍກ່ອນຈຶ່ງນຳເອົາມູນມໍຣະດົກທີ່ຍັງເຫຼືອນັ້ນມາແບ່ງປັນໃຫ້ຜູ້ສືບທອດ (ມາດຕາ 607 ວັກ2ຂອງປະມວນກົດໝາຍແພ່ງ). ແຕ່ຖ້າເປັນກໍລະນີທີ່ບໍ່ໄດ້ປະຕິບັດແລ້ວ, ຈຳເປັນຕ້ອງໄດ້ເຮັດໃຫ້ຈະແจ້ງວ່າ ຜູ້ສືບທອດມູນມໍຣະດົກຈະຕ້ອງມີຄວາມຮັບຜິດຊອບຄືແນວໃດ.
ຕົວຢ່າງ	**1. ກ** ມີມູນມໍຣະດົກ ເງິນຈຳນວນ 300.000.000 ກີບ, ມີລູກ 3 ຄົນຄື: **ຂ**, **ຄ** ແລະ **ງ,** ໜີ້ຕ້ອງສົ່ງ **ຈ** ຈຳນວນ 150.000.000 ກີບ, ວັນທີ 01 ເມສາ 2021 **ກ** ເສຍຊີວິດ, **ຂ**, **ຄ** ແລະ **ງ** ຕົກລົງມອບໃຫ້ **ຄ** ເປັນຜູ້ຄຸ້ມຄອງມູນມໍຣະດົກດັ່ງກ່າວໄວ້ລໍຖ້າແບ່ງປັນ, **ຈ** ສະເໜີໃຫ້ຜູ້ສືບທອດມູນມໍຣະດົກ ຫຼື ຜູ້ຄຸ້ມຄອງມູນມໍຣະດົກ ຊຳລະໜີ້ສິນຂອງ **ກ**. **ກໍລະນີທີ 1.** ມູນມໍຣະດົກຂອງ **ກ** ບໍ່ທັນມີການແບ່ງປັນ **ຈ** ສະເໜີຕໍ່ **ຄ** ທີ່ເປັນຜູ້ຄຸ້ມຄອງມູນມໍຣະດົກນັ້ນໃຫ້ໃຊ້ໜີ້ **ຈ** ກ່ອນທີ່ຈະມີການແບ່ງປັນ, ພວກລູກຈຶ່ງຊຳລະໜີ້ສິນໃຫ້**ຈ**ກ່ອນຈຳນວນ150.00.000ກີບແລ້ວນຳມູນມໍຣະດົກທີ່ເຫຼືອຈຳນວນ 150.000.000 ກີບ ນັ້ນມາແບ່ງປັນກັນ. **ກໍລະນີທີ 2.** ວັນທີ 01 ມີຖຸນາ 2021 ມູນມໍຣະດົກຂອງ **ກ** ພວກລູກໄດ້ແບ່ງປັນກັນແລ້ວ ຜູ້ລະຈຳນວນ 100.000.000 ກີບ, ຕໍ່ມາ ວັນທີ 20 ກໍລະກົດ 2021 **ຈ** ໄດ້ສະເໜີໃຫ້ພວກລູກຂອງ **ກ** ໃຊ້ໜີ້ສິນຈຳນວນ 150.000.000 ກີບ, ພວກລູກ **ກ** ຕ້ອງຮັບຜິດຊອບໃນພູດຂອງຕົນທີ່ໄດ້ຮັບນັ້ນຄືຮັບຜິດຊອບຊຳລະໜີ້ສິນໃຫ້ **ຈ** ຜູ້ລະຈຳນວນ 50.000.000 ກີບ, ຖ້າຫາກວ່າ **ຂ** ຫາກຊຳລະໜີ້ສິນທັງໝົດຈຳນວນ 150.000.000 ກີບ ເກີນກວ່າສ່ວນທີ່ **ຂ** ຈະຕ້ອງຊຳລະແລ້ວ**ຄ**ແລະ**ງ**ກໍຕ້ອງໄດ້ສະເລ່ຍທົດແທນການຊຳລະໜີ້ສິນນັ້ນໃນແກ່**ຂ**. **ກໍລະນີທີ 3**. ວັນທີ 01 ມີຖຸນາ 2021 ມູນມໍຣະດົກ **ກ** ແບ່ງປັນກັນແລ້ວ ຜູ້ລະຈຳນວນ 100.000.000 ກີບ, ຕໍ່ມາ ວັນທີ 01 ກໍລະກົດ 2021 **ງ** ແມ່ນໄດ້ຖືກສານຕັດສິນເປັນຜູ້ລົ້ມລະລາຍມູນມໍຣະດົກທີ່ໄດ້ຮັບມານັ້ນແມ່ນໄປຊຳລະໜີ້ສິນໃນການລົ້ມລະລາຍໝົດແລ້ວ, ຕໍ່ມາ ວັນທີ 20 ກໍລະກົດ 2021 **ຈ** ໄດ້ມາສະເໜີໃຫ້ພວກລູກຂອງ **ກ** ໃຊ້ໜີ້ສິນຈຳນວນ 150.000.000 ກີບ, **ງ** ແມ່ນບໍ່ມີຄວາມສາມາດຊຳລະໜີ້ສິນຕາມພູດຂອງຕົນເອງໄດ້ **ຂ** ແລະ **ຄ** ຕ້ອງຮັບຜິດຊອບສະເລ່ຍໃຊ້ແທນໜີ້ສິນແທນ **ງ** ໃຫ້ແກ່ **ຈ** ທີ່ເປັນເຈົ້າໜີ້. **2.ກ** ມີຊັບສົມບັດຈຳນວນ 100.000.000 ກີບ, ມີລູກ 3 ຄົນຄື: **ຂ**, **ຄ** ແລະ **ງ** ມີໜີ້ຕ້ອງສົ່ງ **ຈ** ຈຳນວນ 150.000.000 ກີບ, ວັນທີ 01 ເມສາ 2021 **ກ** ເສຍຊີວິດ, **ຂ**, **ຄ** ແລະ **ງ** ຕົກລົງມອບໃຫ້ **ຄ** ເປັນຜູ້ຄຸ້ມຄອງມູນມໍຣະດົກດັ່ງກ່າວໄວ້ລໍຖ້າແບ່ງປັນ, ພາຍຫຼັງທີ່ **ກ** ເສຍຊີວິດ **ຈ** ສະເໜີໃຫ້ຜູ້ສືບທອດມູນມໍຣະດົກ ຫຼື ຜູ້ຄຸ້ມຄອງມູນມໍຣະດົກ ຊຳລະໜີ້ສິນຂອງ **ກ**, ກໍລະນີທີ່ **ຂ**, **ຄ** ແລະ **ງ** ຕ້ອງໄດ້ ນຳເອົາຊັບສົມບັດຂອງ **ກ** ຈຳນວນ 100.000.000 ກີບ ມາໃຊ້ແທນໜີ້ສິນໃຫ້ແກ່ **ຈ** ກ່ອນ

	ສ່ວນທີ່ບໍ່ພໍນັ້ນ, ຖ້າຫາກ**ຂ**, **ຄ** ແລະ **ງ** ເຫັນດີສືບຕໍ່ໃຊ້ແທນແມ່ນຂຶ້ນກັບການເຫັນດີນັ້ນ, ແຕ່ກົງກັນຂ້າມ ຖ້າ **ຂ**, **ຄ** ແລະ **ງ** ຫາກປະຕິເສດແລ້ວ **ຈ** ບໍ່ສາມາດທວງທາວໄດ້ແລະເມື່ອຊັບສົມບັດຂອງ**ກ** ໃຊ້ແທນໜີ້ສິນຂອງເຈົ້າມູນໝົດແລ້ວ **ຂ**, **ຄ** ແລະ **ງ** ກໍຈະບໍ່ໄດ້ມີການສືບທອດຊັບສົມບັດຂອງ **ກ** ອີກ. **3: ກ** ມີຊັບສົມບັດເງິນຈຳນວນ 100.000.000 ກີບ, ມີລູກ 2 ຄົນຄື: **ຂ** ແລະ **ຄ**. ໃນວັນທີ 2 ທັນວາ 2020 ກກູ້ຢືມເງິນນຳ ງ ຈຳນວນ 30.000.000 ກີບ, ຕົກມາວັນທີ 1 ມັງກອນ 2021 **ກ** ກູ້ຢືມເງິນນຳ **ຈ** ຈຳນວນ 40.000.000 ກີບ ແລະ ວັນທີ 8 ມີນາ 2021 ກູ້ຢືມເງິນກັບ **ສ** ຈຳນວນ 50.000.000 ກີບ ວັນທີ 01 ເມສາ 2021 **ກ** ເສຍຊີວິດ, **ຂ** ແລະ **ຄ** ຕົກລົງມອບໃຫ້ **ຄ** ເປັນຜູ້ຄຸ້ມຄອງມູນມໍຣະດົກດັ່ງກ່າວໄວ້ລໍຖ້າແບ່ງປັນ, ພາຍຫຼັງ **ກ** ເສຍຊີວິດ ບັນດາເຈົ້າໜີ້ສະເໜີໃຫ້ຜູ້ສືບທອດມູນມໍຣະດົກ ຫຼື ຜູ້ຄຸ້ມຄອງມູນມໍຣະດົກ ຊຳລະໜີ້ສິນຂອງ **ກ**, **ຂ** ແລະ **ຄ** ຕ້ອງໄດ້ນຳເອົາຊັບສົມບັດຂອງ **ກ** ເງິນ 100.000.000 ກີບ ມາໃຊ້ແທນໜີ້ສິນໃຫ້ແກ່ ບັນດາເຈົ້າໜີ້ຂອງ **ກ** ກ່ອນ ໂດຍຊຳລະຕາມບູລິມະສິດຂອງການກູ້ຢືມນັ້ນຕາມລຳດັບກ່ອນສ່ວນທີ່ບໍ່ພໍນັ້ນຖ້າ **ຂ** ແລະ **ຄ** ທີ່ເປັນຜູ້ມີສິດສືບທອດມູນມໍຣະດົກຂອງກເຫັນດີສືບຕໍ່ໃຊ້ແທນແມ່ນຂຶ້ນກັບການເຫັນດີນັ້ນ ແຕ່ກົງກັນຂ້າມ **ຂ** ແລະ **ຄ** ຫາກປະຕິເສດແລ້ວເຈົ້າໜີ້ ບໍ່ສາມາດທວງທາວເອົາຈາກ **ຂ** ແລະ **ຄ** ໄດ້, ເມື່ອຊັບສົມບັດຂອງ**ກ** ໃຊ້ແທນໜີ້ສິນຂອງເຈົ້າມູນໝົດແລ້ວ **ຂ** ແລະ **ຄ** ຈະບໍ່ໄດ້ມີການສືບທອດຊັບສົມບັດຂອງ **ກ** ອີກ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກ ມາດຕາ 56 ຂອງກົດໝາຍວ່າດ້ວຍການສືບທອດມູນມໍຣະດົກ ປີ 2008 ການຊຳລະໜີ້ສິນ ວັກ 2 ກຳນົດວ່າຜູ້ສືບທອດມູນມໍຣະດົກເຫັນວ່າບໍ່ທັນເໝາະສົມເພາະບຸກຄົນດັ່ງກ່າວແມ່ນບໍ່ທັນໄດ້ເປັນຜູ້ສືບທອດເທື່ອ ເປັນພຽງຜູ້ມີສິດສືບທອດເທົ່ານັ້ນ ປະມວນກົດໝາຍແພ່ງ ຈຶ່ງໄດ້ປັບປຸງຄຳວ່າ: “ ຜູ້ສືບທອດ” ມາເປັນ “ຜູ້ມີສິດສືບທອດ” ວັກທີ 2 ຂອງມາດຕາແມ່ນ ການຊຳລະໜີ້ສິນກ່ອນທີ່ຈະມີການແບ່ງປັນ ມູນມໍຣະດົກຜູ້ມີສິດຮັບມູນນັ້ນຈະເປັນບຸກຄົນທີ່ມີສິດສືບທອດມູນມໍຣະດົກ, ສ່ວນວັກທີ3ນັ້ນແມ່ນຫຼັງທີ່ຮັບມູນມໍຣະດົກແລ້ວ ຜູ້ມີສິດສືບທອດມູນມໍຣະດົກກໍຈະກາຍເປັນຜູ້ມີສືບມູນມໍຣະດົກ ຊຶ່ງຈະຕ້ອງຮັບເອົາພັນທະທີ່ຕິດມາກັບມູນມໍຣະດົກນັ້ນໃນພູດທີ່ຕົນເອງໄດ້ຮັບໄປແລ້ວ.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 1738 ຂອງປະມວນກົດໝາຍແພ່ງ ແລະ ພານິດໄທ.
ມາດຕາອ້າງອີງ	ມາດຕາ 560, 570 ແລະ 622 ຂໍ້ 2 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ	ສືບຕໍ່ຄົ້ນຄວ້າ.

ມາດຕາ 626 ກຳນົດເວລາໃນການທວງໜີ້ສິນ

ເຈົ້າໜີ້ມີສິດທວງເອົາໜີ້ສິນຂອງຕົນ ນຳຜູ້ສືບທອດມູນມໍຣະດົກທີ່ໄດ້ຮັບເອົາມູນມໍຣະດົກຫຼືນຳຜູ້ຄຸ້ມຄອງມູນມໍຣະດົກ ຫຼືຜູ້ປະຕິບັດພິໄນກຳ ຫຼື ຍື່ນຄຳຮ້ອງເພື່ອທວງເອົາໜີ້ສິນຕໍ່ຫ້ອງການທະບຽນສານ ຫຼື ນາຍບ້ານບ່ອນທີ່ເປີດການສືບທອດມູນມໍຣະດົກ ຫຼື ຕໍ່ສານ ພາຍໃນເວລາສາມປີນັບແຕ່ວັນທີ່ໄດ້ເປີດການສືບທອດມູນມໍຣະດົກເປັນຕົ້ນໄປ.

ຖ້າເຈົ້າໜີ້ຫາກບໍ່ໄດ້ທວງເອົາໜີ້ສິນຫຼືບໍ່ໄດ້ຍື່ນຄຳຮ້ອງທວງເອົາໜີ້ສິນຂອງຕົນ ພາຍໃນເວລາສາມປີແລ້ວເຈົ້າໜີ້ກໍຈະໝົດສິດໄປ, ເວັ້ນເສຍແຕ່ຜູ້ກ່ຽວຫາກມີເຫດຜົນພຽງພໍເທົ່ານັ້ນ.

ຈຸດປະສົງ	ເພື່ອກຳນົດໃຫ້ຮູ້ກ່ຽວກັບກຳນົດເວລາການທວງໃຫ້ໃຊ້ແທນໜີ້ສິນຂອງເຈົ້າໜີ້ທີ່ສາມາດທວງເອົານຳຜູ້ຄຸ້ມຄອງຊັບສົມບັດ, ຜູ້ປະຕິບັດພິໄນກຳ ຫຼື ຜູ້ສືບທອດທີ່ໄດ້ຮັບມູນມໍຣະດົກ ໃນກໍລະນີທີ່ມີໜີ້ສິນລວມຢູ່ໃນມູນມໍຣະດົກ.

ຕົວຢ່າງ	**ກ** ມີຊັບສົມບັດເງິນຈຳນວນ 300.000.000 ກີບ, ມີລູກ 3 ຄົນຄື: **ຂ**, **ຄ** ແລະ **ງ, ກ** ມີໜີ້ຕ້ອງສົ່ງ **ຈ** ຈຳນວນ 150.000.000 ກີບ, ວັນທີ 10 ເມສາ 2021 **ກ** ເສຍຊີວິດ, ວັນທີ 20 ມີຖຸນາ 2021 **ຈ** ເຈົ້າໜີ້ຈຶ່ງທວງໃຫ້ຜູ້ສືບທອດມູນມໍຣະດົກ ຫຼື ຜູ້ຄຸ້ມຄອງມູນມໍຣະດົກ ຫຼື ຍື່ນຄຳຮ້ອງໄປຍັງຫ້ອງການບ້ານ ຫຼືຫ້ອງການທະບຽນສານບ່ອນທີ່ເປີດການສືບທອດມູນມໍຣະດົກນັ້ນເພື່ອໃຫ້ຊຳລະໜີ້ສິນຂອງ **ກ** ໃຫ້ແກ່ຕົນ, ການກະທຳຂອງ **ຈ** ປະຕິບັດຖືກຕ້ອງຕາມມາດຕານີ້, ກໍລະນີທີ່ **ຈ** ເຈົ້າໜີ້ຫາກບໍ່ໄດ້ທວງເອົາໜີ້ສິນ ຫຼື ຍື່ນຄຳຮ້ອງ ຕໍ່ບຸກຄົນ ຫຼື ພາກສ່ວນທີ່ກ່ຽວຂອງພາຍໃນກຳນົດເວລາ 3 ປີນັ້ນແລ້ວສິດໃນການທວງຂອງເຈົ້າໜີ້ກໍຈະໝົດໄປ, ແຕ່ຖ້າກໍລະນີ **ຈ** ຫາກບໍ່ສາມາດຮູ້ໄດ້ກ່ຽວກັບການເສຍຊີວິດຂອງ **ກ** ຫຼື **ຈ** ຫາກໄປປະຕິບັດໜ້າທີ່ຢູ່ຕ່າງປະເທດ ບໍ່ສາມາດມາທວງໜີ້ສິນນຳຜູ້ສືບທອດມູນມໍຣະດົກ ຫຼື ຜູ້ຄຸ້ມຄອງມູນມໍຣະດົກ ຫຼື ຍື່ນຄຳຮ້ອງຕໍ່ພາກສ່ວນທີ່ກ່ຽວຂ້ອງພາຍໃນເວລາ 3 ປີ, ວັນທີ 20 ສິງຫາ 2024 ກັບມາ ສປປ ລາວ ຮູ້ການເສຍຊີວິດຂອງ **ກ**, **ຈ** ຜູ້ເປັນເຈົ້າໜີ້ໄດ້ທວງໃຫ້ພວກລູກຂອງ **ກ** ໃຫ້ໃຊ້ແທນໜີ້ສິນແກ່ຕົນເອງ ກໍລະນີນີ້ພວກລູກຂອງ **ກ** ປະຕິເສດວ່າອາຍຸຄວາມໃນການທວງໜີ້ສິນຂອງ **ຈ** ໝົດໄປແລ້ວແມ່ນບໍ່ໄດ້.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກມາດຕາ 57 ຂອງກົດໝາຍວ່າດ້ວຍການສືບທອດມູນມໍຣະດົກ ປີ 2008 ກຳນົດເວລາໃນການທວງໜີ້ສິນ ປະມວນກົດໝາຍແພ່ງໄດ້ປ່ຽນຄຳວ່າ "ສຳນັກງານທະບຽນສານ" ມາເປັນ "ຫ້ອງການທະບຽນສານ" ເພື່ອໃຫ້ສອດຄ່ອງກັບກົດໝາຍວ່າດ້ວຍທະບຽນສານ ທີ່ໄດ້ມີການປັບປຸງໃນ ປີ 2009.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 935 ແລະ 957 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 622 ແລະ 625 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ	ມະຕິຕົກລົງ ຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 039/ຄປຈ, ລົງວັນທີ 31 ພຶດສະພາ 2012 ກ່ຽວກັບການຕີຄວາມໝາຍກົດໝາຍ ໄດ້ຕີຄວາມໝາຍຂອງການທວງແມ່ນເລີ່ມນັບແຕ່ມື້ທວງເທື່ອສຸດທ້າຍຢ່າງເປັນລາຍລັກອັກສອນ.

ມາດຕາ 627 ຂອບເຂດສິດໃນການຊໍ້ຂາດມູນມໍຣະດົກ

ກ່ອນການແບ່ງມູນມໍຣະດົກຫຼືກ່ອນການຮັບໃບຢັ້ງຢືນການຮັບມູນມໍຣະດົກນັ້ນ,ຜູ້ປົກຄອງຫຼືຜູ້ມີສິດສືບທອດມູນມໍຣະດົກທີ່ໄດ້ຄຸ້ມຄອງມູນມໍຣະດົກຈະບໍ່ມີສິດຊໍ້ຂາດມູນມໍຣະດົກດັ່ງກ່າວ, ເວັ້ນເສຍແຕ່ ໃນກໍລະນີທີ່ໄດ້ໃຊ້ຈ່າຍເພື່ອ:

1. ເບີ່ງແຍງ, ປິ່ນປົວ ຫຼື ມ້ຽນຄາບສົ່ງສະການເຈົ້າມູນມໍຣະດົກ;
2. ເບີ່ງແຍງລ້ຽງດູບຸກຄົນທີ່ຢູ່ພາຍໃຕ້ການອຸປະການະຂອງເຈົ້າມູນມໍຣະດົກ;
3. ຊຳລະຄ່າແຮງງານແລະອື່ນໆ ທີ່ຕົກເປັນພັນທະຂອງເຈົ້າມູນມໍຣະດົກ;
4. ປົກປັກຮັກສາແລະຄຸ້ມຄອງມູນມໍຣະດົກ.

ຈຸດປະສົງ	ໂດຍຫຼັກການແລ້ວ ຜູ້ປົກຄອງ ແລະ ຜູ້ສືບທອດທີ່ໄດ້ຄຸ້ມຄອງມູນມໍຣະດົກ ຈະບໍ່ສາມາດຊໍ້ຂາດມູນມໍຣະດົກໄດ້ຖ້າບໍ່ທັນໄດ້ປະຕິບັດຕາມມາດຕາ 570 ຂອງປະມວນກົດໝາຍແພ່ງມາດຕານີ້ແມ່ນເພື່ອຮັບປະກັນສິດຂອງເຈົ້າໜີ້ (ເຈົ້າໜີ້ຂອງໜີ້ສິນທີ່ລວມຢູ່ໃນມູນມໍຣະດົກ) ຕໍ່ເຈົ້າຂອງມູນມໍຣະດົກພ້ອມທັງຫຼີກລ້ຽງການເກີດຂໍ້ຂັດແຍ່ງລະຫວ່າງຜູ້ສືບທອດຮ່ວມໃນເວລາແບ່ງປັນຊັບສົມບັດ, ແຕ່ມາດຕານີ້ແມ່ນກໍລະນີຍົກເວັ້ນທີ່ສາມາດຊໍ້ຂາດມູນມໍຣະດົກໄດ້.

ຕົວຢ່າງ	**1. ກ** ເປັນເຈົ້າມູນມໍຣະດົກ ຄື: ທີ່ດິນ ແລະ ເຮືອນຫຼັງ ມູນຄ່າ 500.000.000 ກີບ, ໂຮງງານເຟີນິເຈີ 1 ຫຼັງ ມູນຄ່າ ຈຳນວນ 600.000.000 ກີບ, ລົດໃຫຍ່ 3 ຄັນ, ເງິນໃນບັນຊີ ຈຳນວນ 3 ບັນຊີ ລວມເປັນເງິນ 1.000.000.000 ກີບ, **ກ** ມີລູກ 4 ຄົນ ຄື: **ສ** ອາຍຸ 35 ປີ, ຊ ອາຍຸ 32 ປີ, ຍ ອາຍຸ 26 ປີ ແລະ **ດ** ອາ ຍຸ 17 ປີ, ພາຍຫຼັງ **ກ** ເສຍຊີວິດພວກລູກທີ່ພົ້ນກະສຽນອາຍຸ ແລະ ຍາດພີ່ນ້ອງ ເຫັນດີໃຫ້ **ສ** ເປັນຜູ້ຄຸ້ມຄອງມູນມໍຣະດົກຂອງພໍ່ໄວ້ເພື່ອລໍຖ້າການແບ່ງປັນໃຫ້ຜູ້ມີສິດສືບທອດມູນມໍຣະດົກ ສ ຜູ້ຄຸ້ມຄອງຈະຕ້ອງໄດ້ຊີ້ຂາດມູນນັ້ນໃນການ: 1. ຄ່າມ້ຽນຄາບສິ່ງສະການຂອງ **ກ** (ຜູ້ເປັນພໍ່ກ່ອນ); 2.ຈ່າຍຄ່າເບິ່ງແຍງລ້ຽງດູເປັນຕົ້ນແມ່ນດທີ່ບໍ່ທັນພົ້ນກະສຽນອາຍຸທີ່ຍັງຢູ່ນຳພໍ່; 3. ຈ່າຍຄ່າແຮງງານໃຫ້ແກ່ພະນັກງານແລະກຳມະກອນໃນໂຮງງານເຟີນິເຈີລວມທັງຄ່າໃຊ້ຈ່າຍອື່ນໆໃນການປົກປັກຮັກສາມູນມໍຣະດົກນັ້ນກ່ອນທີ່ຈະມີການແບ່ງປັນໃຫ້ບັນດາລູກຜູ້ມີສິດສືບທອດ, ການໃຊ້ຈ່າຍຕ່າງໆນັ້ນຜູ້ຄຸ້ມຄອງຕ້ອງໄດ້ເຮັດບັນຊີລາຍຈ່າຍເປັນລາຍລັກອັກສອນ ຕາມສິດ ແລະ ໜ້າທີ່ຂອງຜູ້ຄຸ້ມຄອງມູນມໍຣະດົກ ມາດຕາ 622 ວັກທີ 1 ຂອງປະມວນກົດໝາຍແພ່ງ. **2. ກ** ມີເງິນຝາກທະນາຄານຈຳນວນ 400.000.000 ກີບ, **ກ** ມີລູກ 4 ຄົນ ຄື: **ຂ** ອາຍຸ 35 ປີ, **ຄ** ອາຍຸ 32 ປີ, **ງ** ອາຍຸ 26 ປີ ແລະ **ຈ** ອາຍຸ 17 ປີ, ວັນທີ 12 ເມສາ 2021 ກ ເສຍຊີວິດ ພາຍຫຼັງ **ກ** ເສຍຊີວິດພວກລູກທີ່ພົ້ນກະສຽນອາຍຸ ແລະ ຍາດພີ່ນ້ອງ ເຫັນດີໃຫ້ **ສ** ເປັນຜູ້ຄຸ້ມຄອງມູນມໍຣະດົກຂອງ **ກ** ໄວ້ເພື່ອລໍຖ້າການແບ່ງປັນໃຫ້ຜູ້ມີສິດສືບທອດມູນມໍຣະດົກ ໂດຍທີ່ **ສ** ຜູ້ຄຸ້ມຄອງຈະຕ້ອງໄດ້ຊີ້ຂາດມູນນັ້ນໃນການ: 1. ຄ່າມ້ຽນຄາບສິ່ງສະການຂອງ **ກ** (ຜູ້ເປັນພໍ່ກ່ອນ) ແຕ່ເນື່ອງຈາກວ່າບັນຊີເງິນຝາກຂອງ **ກ** ເປັນບັນຊີຝາກມີກຳນົດບໍ່ສາມາດຖອນອອກໄດ້, **ສ** ເອົາເງິນຂອງຕົນເອງມາຈ່າຍຄ່າມ້ຽນຄ່າສິ່ງສະການທັງໝົດຈຳນວນ 80.000.000 ກີບ ໂດຍມີການຮັບຮູ້ຈາກບັນດາຜູ້ສືບທອດ ແລະ ມີເອກະສານຢັ້ງຢືນການຈ່າຍເງິນດັ່ງກ່າວ. 2. ຈ່າຍຄ່າເບິ່ງແຍງລ້ຽງດູເປັນຕົ້ນແມ່ນ**ຈ**ທີ່ບໍ່ທັນພົ້ນກະສຽນອາຍຸທີ່ຍັງຢູ່ນຳພໍ່ເຊັ່ນ: ຄ່າໃຊ້ຈ່າຍໃນການສຶກສາຮ່ຳຮຽນ, ຄ່າໃຊ້ຈ່າຍປິ່ນປົວແລະອື່ນໆເພື່ອຜົນປະໂຫຍດຂອງ **ຈ**, ພາຍຫຼັງ **ສ** ສາມາດຖອນເງິນຂອງ **ກ** ອອກມາຈາກທະນາຄານໄດ້ແລ້ວຕ້ອງນຳເງິນທີ່ເປັນມູນມໍຣະດົກຂອງກນັ້ນໄປຈ່າຍຄ່າມ້ຽນຄາບສິ່ງສະການ ແລະ ຄ່າເບິ່ງແຍງລ້ຽງດູ **ຈ** ທີ່ **ສ** ຈ່າຍໄປກ່ອນແລ້ວນັ້ນສາກ່ອນ ແລ້ວຜູ້ສືບທອດມູນມໍຣະດົກ ຈຶ່ງເອົາມູນມໍຣະດົກທີ່ຍັງເຫຼືອຂອງ **ກ** ມາແບ່ງຕາມກົດໝາຍ, ການໃຊ້ຈ່າຍຕ່າງໆເຫຼົ່ານັ້ນ **ສ** ແມ່ນໄດ້ເຮັດບັນຊີລາຍຈ່າຍເປັນລາຍລັກອັກສອນ ແລະ ມີການຢັ້ງຢືນຈາກພາກສ່ວນທີ່ກ່ຽວຂ້ອງ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກມາດຕາ 44 ຂອງກົດໝາຍວ່າດ້ວຍການສືບທອດມູນມໍຣະດົກ ປີ 2008 ຂອບເຂດສິດໃນການຊີ້ຂາດມູນມໍຣະດົກກຳນົດວ່າຜູ້ສືບທອດມູນມໍຣະດົກ ນັ້ນເຫັນວ່າບໍ່ທັນເໝາະສົມເພາະບຸກຄົນດັ່ງກ່າວແມ່ນບໍ່ທັນໄດ້ເປັນຜູ້ສືບທອດເທື່ອເປັນພຽງຜູ້ມີສິດສືບທອດເທົ່ານັ້ນ ປະມວນກົດໝາຍແພ່ງ ຈຶ່ງໄດ້ປັບປຸງຄຳວ່າ: "ຜູ້ສືບທອດ" ມາເປັນ "ຜູ້ມີສິດສືບທອດ"
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 1739 ຂອງປະມວນແພ່ງ ແລະ ພານິດໄທ; ມາດຕາ 885, 909/2 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 570, 607, 610, 621 ແລະ 622 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ມາດຕາ 628 ການແບ່ງປັນມູນມໍຣະດົກທີ່ບໍ່ສາມາດຕົກລົງກັນໄດ້

ຖ້າການແບ່ງປັນມູນມໍຣະດົກຫາກບໍ່ສາມາດຕົກລົງກັນໄດ້ລະຫວ່າງບັນດາຜູ້ມີສິດສືບທອດມູນມໍຣະດົກດ້ວຍກັນແລ້ວ ກໍແມ່ນສານຈະເປັນຜູ້ຕົກລົງ ຖ້າຫາກມີການຮ້ອງຟ້ອງ.

ຈຸດປະສົງ	ເພື່ອແກ້ໄຂຂໍ້ຂັດແຍ່ງກ່ຽວກັບການແບ່ງປັນມູນມໍຣະດົກທີ່ບໍ່ສາມາດຕົກລົງກັນໄດ້ ລະຫວ່າງ ຜູ້ມີສິດສືບທອດມູນມໍຣະດົກດ້ວຍກັນ.
ຕົວຢ່າງ	**ກ** ມີມູນມໍຣະດົກ ຄື: ທີ່ດິນ ແລະ ເຮືອນຫຼັງ ມູນຄ່າ ຈຳນວນ 500.000.000 ກີບ, ໂຮງງານເຟີນິເຈີ 1 ຫຼັງ ມູນຄ່າຈຳນວນ 600.000.000 ກີບ, ລົດໃຫຍ່ 3 ຄັນ, ເງິນໃນບັນຊີ ຈຳນວນ 3 ບັນຊີ ລວມເປັນເງິນ ຈຳນວນ 1.000.000.000 ກີບ. ມີລູກ 4 ຄົນ ຄື: **ສ** ອາຍຸ 35 ປີ, **ຊ** ອາຍຸ 32 ປີ, **ຍ** ອາຍຸ 26 ປີ ແລະ **ດ** ອາຍຸ 17 ປີ, ພາຍຫຼັງທີ່ **ກ** ເສຍຊີວິດພວກລູກທີ່ມີສິດໃນການສືບທອດມູນແມ່ນບໍ່ສາມາດຕົກລົງກັນໄດ້ວ່າຈະແບ່ງປັນມູນມໍຣະດົກກັນແນວໃດ, **ຊ** ຜູ້ມີສິດສືບທອດມູນມໍຣະດົກຂອງກຮ້ອງຟ້ອງຫາສານເພື່ອແບ່ງປັນມູນມໍຣະດົກຂອງກ ຕາມກົດໝາຍ, ສ່ວນອາຍຸຄວາມໃນການຮ້ອງຟ້ອງແມ່ນກຳນົດໄວ້ໃນມາດຕາ 608 ຂອງປະມວນກົດໝາຍແພ່ງ.
ເຫດຜົນໃນການປັບປຸງ	ມາດຕານີ້ປັບປຸງມາຈາກມາດຕາ 58 ຂອງກົດໝາຍວ່າດ້ວຍການສືບທອດມູນມໍຣະດົກ ປີ 2008 ການແບ່ງປັນມໍຣະດົກທີ່ບໍ່ສາມາດຕົກລົງກັນໄດ້ກຳນົດວ່າຜູ້ສືບທອດມູນມໍຣະດົກ ເຫັນວ່າບໍ່ທັນເໝາະສົມເພາະບຸກຄົນດັ່ງກ່າວແມ່ນບໍ່ທັນໄດ້ເປັນຜູ້ສືບທອດເທື່ອເປັນພຽງຜູ້ມີສິດສືບທອດເທົ່ານັ້ນ ປະມວນກົດໝາຍແພ່ງ ຈຶ່ງໄດ້ປັບປຸງຄຳວ່າ: “ ຜູ້ສືບທອດ” ມາເປັນ “ຜູ້ມີສິດສືບທອດ”
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງຂອງປະເທດອື່ນ	ມາດຕາ 907 ຂອງປະມວນກົດໝາຍແພ່ງຍີ່ປຸ່ນ.
ມາດຕາອ້າງອີງ	ມາດຕາ 606 ແລ 608 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ.

ບົດອະທິບາຍປະມວນກົດໝາຍແພ່ງ

ພາກທີ IX ບົດບັນຍັດສຸດທ້າຍ
(ມາດຕາ 629-630)

ພາກທີ IX
ບົດບັນຍັດສຸດທ້າຍ

ມາດຕາ 629 ການຈັດຕັ້ງປະຕິບັດ

ລັດຖະບານ, ສານປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນສູງສຸດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດປະມວນກົດໝາຍສະບັບນີ້.

ພົນລະເມືອງລາວ, ຄົນຕ່າງປະເທດ, ຄົນຕ່າງດ້າວ ແລະ ຄົນບໍ່ມີສັນຊາດ ທີ່ດຳລົງຊີວິດ ຫຼື ເຮັດທຸລະກິດ, ການຄ້າ ຫຼື ວິຊາຊີບ ຢູ່ ສປປ ລາວ ແລະ ທຸກອົງການຈັດຕັ້ງ ຕ້ອງເຄົາລົບ ແລະ ປະຕິບັດປະມວນກົດໝາຍສະບັບນີ້.

ຈຸດປະສົງ	ເພື່ອກຳນົດອົງການຈັດຕັ້ງປະຕິບັດປະມວນກົດໝາຍແພ່ງ ຊຶ່ງລັດຖະບານ (ອົງການບໍລິຫານ) ເປັນຜູ້ອຳນວຍຄວາມສະດວກ ແລະ ຊຸກຍູ້ການຈັດຕັ້ງປະຕິບັດ; ສານປະຊາຊົນ ແລະ ອົງການໄອຍະການປະຊາຊົນ (ອົງການຕຸລາການ) ເປັນຜູ້ນຳໃຊ້ປະມວນກົດໝາຍແພ່ງ ໃນກໍລະນີທີ່ມີການສະເໜີຂໍຂັດແຍ່ງໃຫ້ພິຈາລະນາແກ້ໄຂ. ເພື່ອກຳນົດໃຫ້ເຫັນວ່າ ພົນລະເມືອງລາວ, ຄົນຕ່າງປະເທດ, ຄົນຕ່າງດ້າວ ແລະ ຄົນບໍ່ມີສັນຊາດ ທີ່ດຳລົງຊີວິດ ຫຼື ເຄື່ອນໄຫວທຸລະກິດ ຢູ່ ສປປ ລາວ ແລະ ທຸກອົງການຈັດຕັ້ງຕ້ອງເຄົາລົບ ແລະ ປະຕິບັດຕາມປະມວນກົດໝາຍແພ່ງ.
ຕົວຢ່າງ	**1. ກ** ແລະ **ຂ** (ນັກທ່ອງທ່ຽວຄົນຕ່າງປະເທດ) ເຮັດສັນຍາເຊົ່າລົດຈັກ ເພື່ອຂີ່ຫຼິ້ນພາຍໃນເທດສະບານ ແລະ ຕໍ່ມາ **ກ** ຍ້ອນຂີ່ໄວ ແລະ ບໍ່ລົ້ງທາງຢູ່ລາວ ຈຶ່ງໄປຕຳເອົາຮົ້ວພາໃຫ້ຮົ້ວຂອງບ້ານ **ຄ** ເປເພ, **ກ** ກໍຕ້ອງໄດ້ໃຊ້ແທນຄ່າເສຍຫາຍໃຫ້ **ຄ** ຕາມປະມວນກົດໝາຍແພ່ງລາວ ເຖິງວ່າ **ກ** ຈະເປັນພົນລະເມືອງຕ່າງປະເທດກໍຕາມ. **2. ກ** (ພົນລະເມືອງລາວ) ໄປຮຽນຂັ້ນປະລິນຍາຕີ ຢູ່ຕ່າງປະເທດ ແລະ ໄດ້ມັກຮັກກັບ **ຂ** (ພົນລະເມືອງຕ່າງປະເທດ ຊຶ່ງມີອາຍຸ 17 ປີ) ພາຍໃຕ້ກົດໝາຍຂອງປະເທດດັ່ງກ່າວ ທີ່ອະນຸຍາດໃຫ້ແຕ່ງດອງໄດ້. ຕໍ່ມາອີກ ສອງປີ ທັງສອງ ມີລູກ 1 ຄົນ ຄື **ຄ**, ສາຍພົວພັນລະຫວ່າງພໍ່ແມ່ລູກ ລະຫວ່າງ **ກ**, **ຂ** ແລະ **ຄ** ແມ່ນຈະຕ້ອງປະຕິບັດຕາມປະມວນກົດໝາຍແພ່ງຂອງ ສປປ ລາວ.
ເຫດຜົນໃນການສ້າງໃໝ່	ມາດຕານີ້ ສ້າງໃໝ່ ຍ້ອນວ່າຕາມທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍການສ້າງນິຕິກຳ ທີ່ນິຕິກຳໃດໜຶ່ງຕ້ອງກຳນົດອົງການຈັດຕັ້ງປະຕິບັດເພື່ອຮັບຜິດຊອບຈັດຕັ້ງປະຕິບັດກົດໝາຍ. ສ່ວນພົນລະເມືອງລາວ, ຄົນຕ່າງປະເທດ, ຄົນຕ່າງດ້າວ, ຄົນບໍ່ມີສັນຊາດ ທີ່ອາໄສຢູ່ ສປປລາວ ຫຼື ດຳເນີນທຸລະກິດ, ລົງທຶນ ຫຼື ເຮັດວຽກ ຢູ່ ສປປລາວ ມີພັນທະຕ້ອງເຄົາລົບ ແລະ ປະຕິບັດກົດໝາຍລາວ ກໍຄືປະຕິບັດຕາມ ປະມວນກົດໝາຍແພ່ງ ຢ່າງເຄັ່ງຂັດ. ມາດຕາ 629 ກຳນົດຫຼັກການກ່ຽວກັບຜູ້ຈັດຕັ້ງປະຕິບັດກົດໝາຍ ແລະ ມາດຕາ 7 ຂອງປະມວນກົດໝາຍແພ່ງ ກຳນົດຫຼັກການນຳໃຊ້ປະມວນກົດໝາຍແພ່ງ ຊຶ່ງ ພົນລະເມືອງລາວ, ຄົນຕ່າງປະເທດ, ຄົນຕ່າງດ້າວ ແລະ ຄົນບໍ່ມີສັນຊາດ ທີ່ດຳລົງ ຊີວິດ ຫຼື ເຮັດທຸລະກິດ, ການຄ້າ ຫຼື ວິຊາຊີບ ຢູ່ ສປປ ລາວ ຕ້ອງນຳໃຊ້ໃນສາຍພົວ ພັນທາງແພ່ງ, ຍົກເວັ້ນມີການກຳນົດເປັນຢ່າງອື່ນໄວ້ໃນສັນຍາ ຫຼື ສິນທິສັນຍາທີ່ ກ່ຽວຂ້ອງ ທີ່ ສປປ ລາວ ເປັນພາຄີ.
ຂໍ້ມູນກ່ຽວກັບປະມວນກົດ ໝາຍແພ່ງ ຂອງປະເທດອື່ນ	ສືບຕໍ່ຄົ້ນຄວ້າ

ມາດຕາອ້າງອີງ	ມາດຕາ 7 ຂອງປະມວນກົດໝາຍແພ່ງ.
ຂໍ້ມູນອື່ນ ຫຼື ປະເພນີສານ	ສືບຕໍ່ຄົ້ນຄວ້າ

ມາດຕາ 630 ຜົນສັກສິດ

ປະມວນກົດໝາຍສະບັບນີ້ ມີຜົນສັກສິດ ຫຼັງຈາກ ປະທານປະເທດແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ສາມຮ້ອຍຫົກສິບຫ້າວັນ ແລະ ໄດ້ລົງໃນ ຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ນິຕິກຳໃດທີ່ສ້າງຂຶ້ນ ກ່ອນປະມວນກົດໝາຍສະບັບນີ້ມີຜົນສັກສິດ ໃຫ້ນຳໃຊ້ບົດບັນຍັດຂອງກົດ ໝາຍທີ່ກ່ຽວຂ້ອງ, ເວັ້ນເສຍແຕ່ ກົດໝາຍຫາກໄດ້ກຳນົດໄວ້ເປັນຢ່າງອື່ນ.

ປະມວນກົດໝາຍສະບັບນີ້ ປ່ຽນແທນ ກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ, ກົດໝາຍວ່າດ້ວຍຄອບຄົວ, ກົດໝາຍວ່າດ້ວຍກຳມະສິດ, ກົດໝາຍວ່າດ້ວຍການສືບທອດມູນມໍຣະດົກ ແລະ ບາງມາດຕາກົດໝາຍວ່າດ້ວຍການຄ້ຳປະກັນການປະຕິບັດສັນຍາ ແລະ ກົດໝາຍອື່ນທີ່ມີລັກສະນະ ທາງແພ່ງທີ່ກ່ຽວຂ້ອງ.

ຈຸດປະສົງ	ເພື່ອກຳນົດວັນທີ່ປະມວນກົດໝາຍແພ່ງ ມີຜົນສັກສິດ. ເພື່ອກຳນົດຜົນສັກສິດຂອງປະມວນກົດໝາຍແພ່ງ ຕໍ່ນິຕິກຳທີ່ເກີດຂຶ້ນກ່ອນ ປະມວນກົດໝາຍແພ່ງມີຜົນສັກສິດ. ເພື່ອກຳນົດໃຫ້ຮູ້ວ່າ ພາຍຫຼັງປະມວນກົດໝາຍແພ່ງ ມີຜົນສັກສິດແລ້ວ ກົດ ໝາຍບໍ່ມີຜົນສັກສິດ ກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ, ກົດໝາຍວ່າດ້ວຍກຳມະສິດ,ກົດໝາຍວ່າດ້ວຍການຄ້ຳປະກັນການປະຕິບັດສັນຍາ, ກົດໝາຍວ່າດ້ວຍ ການສືບທອດມູນມໍຣະດົກ ແລະ ບາງມາດຕາຂອງກົດໝາຍ ອື່ນກ່ຽວຂ້ອງ ບໍ່ມີຜົນສັກສິດອີກ ເພາະບັນດາກົດໝາຍເຫຼົ່ານັ້ນ ໄດ້ຖືກປັບປຸງມາ ເປັນເນື້ອໃນຂອງປະມວນກົດໝາຍແພ່ງແລ້ວ ສະນັ້ນ, ຈະບໍ່ມີການນຳໃຊ້ສອງ ກົດໝາຍທີ່ມີບົດບັນຍັດຄ້າຍຄຽງກັນ ໝາຍຄວາມວ່ານັບແຕ່ປະມວນກົດໝາຍ ແພ່ງ ມີຜົນສັກສິດບໍ່ນຳໃຊ້ກົດໝາຍເຫຼົ່ານັ້ນອີກ (ຖືກປ່ຽນແທນດ້ວຍປະມວນ ກົດໝາຍແພ່ງ).
ຕົວຢ່າງ	**1.** ວັນທີ 1 ກຸມພາ 2017 **ກ** ແລະ **ຂ** ເຮັດສັນຍາເຊົ່າຊື້ລົດເກັງ ກຳນົດເວລາ 5 ປີ ຊຶ່ງມີເງື່ອນໄຂວ່າ ຖ້າ **ກ** ບໍ່ຊຳລະຄ່າເຊົ່າຊື້ສອງງວດຕິດຕໍ່ກັນ **ຂ** ຈະເອົາ ລົດເກັງນັ້ນຄືນ; ຕໍ່ມາທັງສອງ ມີຂໍ້ຂັດແຍ່ງກັນ, ສັນຍານີ້ ເຮັດຂຶ້ນກ່ອນປະ ມວນກົດໝາຍແພ່ງມີຜົນສັກສິດຄື ວັນທີ 27 ພຶດສະພາ 2020, ສະນັ້ນ ກົດ ໝາຍທີ່ນຳໃຊ້ໃນການແກ້ໄຂຂໍ້ຂັດແຍ່ງນີ້ ແມ່ນກົດໝາຍວ່າດ້ວຍຂໍ້ຜູກພັນ ໃນສັນຍາ ແລະ ນອກສັນຍາ ສະບັບ ປີ 2008 ຊຶ່ງບໍ່ໄດ້ມີຂໍ້ບັນຍັດຍົກເວັ້ນ ໄວ້ແຕ່ຢ່າງໃດ. **2.** **ກ** ເຊົ່າເຮືອນ **ຂ** ໃນວັນທີ 1 ກັນຍາ 2017, ກຳນົດເວລາເຊົ່າແມ່ນ 5 ປີ ວັນ ສິ້ນສຸດແມ່ນ ວັນທີ 1 ກັນຍາ 2022, ຈາກນັ້ນ ໃນວັນທີ 15 ມິຖຸນາ 2022 **ກ** ແລະ **ຂ** ຕົກລົງຕໍ່ກຳນົດເວລາເຊົ່າ ອອກໄປອີກ 3 ປີ ຮອດປີ 2025, ໃນ ເວລາຕໍ່ມາ **ກ** ແລະ **ຂ** ເກີດຂໍ້ຂັດແຍ່ງກັນກ່ຽວກັບສັນຍາເຊົ່າເຮືອນ, ການ ແກ້ໄຂ ຕ້ອງນຳໃຊ້ປະມວນກົດໝາຍແພ່ງ. ນອກຈາກນີ້ ປະມວນກົດໝາຍແພ່ງ ຍັງປ່ຽນແທນ ກົດໝາຍວ່າດ້ວຍ ຄອບຄົວ, ກົດໝາຍວ່າດ້ວຍກຳມະສິດ, ກົດໝາຍວ່າດ້ວຍການສືບທອດ ມູນມໍຣະດົກ ແລະ ບາງມາດຕາຂອງກົດໝາຍວ່າດ້ວຍການຄ້ຳປະກັນການ ປະຕິບັດສັນຍາ ແລະ ກົດໝາຍອື່ນທີ່ມີລັກສະນະທາງແພ່ງ ເປັນຕົ້ນ ກົດ ໝາຍ ວ່າດ້ວຍທີ່ດິນ, ປ່າໄມ້, ແຮ່ທາດ...

ເຫດຜົນໃນການສ້າງໃໝ່	ມາດຕານີ້ ສ້າງໃໝ່ຕາມທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍການສ້າງນິຕິກຳ ນິຕິກຳໃດໜຶ່ງ ຫຼື ກົດໝາຍມີຜົນສັກສິດ ຊຶ່ງກຳນົດວ່າ"ລັດຖະທຳມະນູນ, ກົດໝາຍ ແລະ ລັດຖະບັນຍັດ ທີ່ປະກາດໃຊ້ແລ້ວ ມີຜົນສັກສິດຍ້ອນຫຼັງພາຍໃນ ສິບຫາ ວັນນັບແຕ່ວັນທີ ໄດ້ລົງຈົດໝາຍເຫດທາງລັດຖະການເປັນຕົ້ນໄປ". ປະມວນກົດໝາຍແພ່ງ ທີ່ໄດ້ປະກາດໃຊ້ໂດຍປະທານປະເທດ ໄດ້ລົງໃນຈົດໝາຍເຫດທາງລັດຖະການ ໃນວັນທີ 11 ພຶດສະພາ 2020 ສະນັ້ນ ປະມວນກົດໝາຍແພ່ງ ມີຜົນສັກສິດ ນັບແຕ່ວັນທີ **27 ພຶດສະພາ 2020** ເປັນຕົ້ນໄປ. ຍ້ອນປະມວນກົດໝາຍແພ່ງເປັນກົດໝາຍທີ່ຮິບໂธມເອົາກົດໝາຍຕ່າງໆເຂົ້າກັນ ສະນັ້ນ ເພື່ອໃຫ້ສັງຄົມສາມາດເຊື່ອມຊຶມ ແລະ ອົງການຈັດຕັ້ງທີ່ກ່ຽວຂ້ອງກໍສາມາດກຳໄດ້ເນື້ອໃນຈິດໃຈ ຂອງປະມວນກົດໝາຍແພ່ງທັງໝົດໄດ້ ຈຶ່ງຈຳເປັນຕ້ອງໂຄສະນາເຜີຍແຜ່ ແລະ ເກັບກຳຂໍ້ມູນນຳຕື່ມອີກເພື່ອເຮັດໃຫ້ແຕ່ລະມາດຕາສາມາດສອດຄ່ອງທີ່ສຸດ ພາຍໃນເວລາ 365 ວັນ ຫຼື 1 ປີ. ວັກ 3 ຂອງມາດຕາ 630 ກຳນົດໃຫ້ປະມວນກົດໝາຍແພ່ງ ປ່ຽນແທນບາງມາດຕາຂອງກົດໝາຍວ່າດ້ວຍການຄ້ຳປະກັນການປະຕິບັດສັນຍາ ປີ 2005 ເພື່ອເຮັດໃຫ້ບັນດານິຕິກຳໃຕ້ກົດໝາຍທີ່ສ້າງຂຶ້ນເພື່ອປະຕິບັດກົດໝາຍດັ່ງກ່າວ ເຊັ່ນ: ດຳລັດວ່າດ້ວຍການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຄ້ຳປະກັນການຕັດສິນ ຂອງສານ ປີ 2012, ດຳລັດວ່າດ້ວຍໂຮງຊວດຈຳ; ດຳລັດວ່າດ້ວຍການເຊົ່າສິນເຊື່ອ ແລະ ອື່ນໆ ທີ່ກ່ຽວຂ້ອງກັບການຄ້ຳປະກັນ ຍັງມີຜົນສັກສິດໄດ້ຍ້ອນວ່າໃນສະພາບຕົວຈິງ ພາກທຸລະກິດ ແລະ ພາກການລົງທຶນຂອງເອກະຊົນ ຍັງໄດ້ນຳໃຊ້ບັນດານິຕິກຳເຫຼົ່ານັ້ນ ສະນັ້ນ, ຈຶ່ງຕ້ອງຮັກສາໄວ້ ແລ້ວຈຶ່ງປັບປຸງ ແລະ ພັດທະນາໃຫ້ເຂົ້າກັບຫຼັກການລວມຂອງການຄ້ຳປະກັນທີ່ກຳນົດໄວ້ໃນປະມວນກົດໝາຍແພ່ງ. ຄຳວ່າ "ປ່ຽນແທນກົດໝາຍ" ໃນວັກສາມຂອງມາດຕານີ້ ໝາຍເຖິງບົດບັນຍັດຂອງປະມວນກົດໝາຍແພ່ງປ່ຽນແທນບົດບັນຍັດຂອງກົດໝາຍທີ່ກຳນົດໃນວັກສາມດັ່ງກ່າວ ແລະ ຍັງໝາຍຄວາມວ່າກົດໝາຍເຫຼົ່ານັ້ນຖືກລົບລ້າງໄປ ແລະ ແທນດ້ວຍປະມວນກົດໝາຍແພ່ງ ຍົກເວັ້ນບາງມາດຕາທີ່ປະມວນກົດໝາຍແພ່ງບໍ່ໄດ້ກ່າວໄວ້ ກໍຍັງໃຊ້ໄດ້ຢູ່ເຊັ່ນ: ມາດຕາ 54 ຂອງກົດໝາຍວ່າດ້ວຍຄອບຄົວ ທີ່ກຳນົດວັນຄອບ ຄົວແຫ່ງຊາດ (ວັນທີ 24 ທັນວາ) ຊຶ່ງຍັງມີຜົນສັກສິດຢູ່.
ຂໍ້ມູນກ່ຽວກັບປະມວນກົດໝາຍແພ່ງ ຂອງປະເທດອື່ນ	ມາດຕາ 688 ຂອງປະມວນກົດໝາຍແພ່ງຫວຽດນາມ ປີ 2015.
ມາດຕາ ຫຼື ກົດໝາຍທີ່ກ່ຽວຂ້ອງ	ມາດຕາ 80 ຂອງກົດໝາຍວ່າດ້ວຍການສ້າງນິຕິກຳ, ສະບັບເລກທີ 19/ສພຊ, ລົງວັນທີ 12 ກໍລະກົດ 2020.
ຂໍ້ມູນອື່ນ ຫຼື ປະເພນີສານ	ຂໍ້ສັງເກດ (ໃນກໍລະນີທີ່ກ່ຽວຂ້ອງກັບການດຳເນີນຄະດີແພ່ງ) ໃນກໍລະນີທີ່ສານຂັ້ນຕົ້ນຕັດສິນ ໂດຍອີງໃສ່ກົດໝາຍທີ່ມີຜົນສັກສິດກ່ອນປະມວນກົດໝາຍແພ່ງມີຜົນສັກສິດແລ້ວ, ຄູ່ກໍລະນີຝ່າຍໜຶ່ງບໍ່ພໍໃຈ ຈຶ່ງຮ້ອງຂໍອຸທອນມາສານຂັ້ນອຸທອນຖັດໄປ, ໃນກໍລະນີນີ້ ສານຂັ້ນອຸທອນ ຄວນພິຈາລະນາເບິ່ງວ່າ: **(ກ).** ສານຂັ້ນຕົ້ນນຳໃຊ້ກົດໝາຍນັ້ນ ສອດຄ່ອງກັບ ວັກສອງ ຂອງມາດຕາ 630 ຫຼື ບໍ່? ແລະ ຖ້າສອດຄ່ອງແລ້ວ **(ຂ).** ສານຂັ້ນອຸທອນຄວນນຳໃຊ້ກົດໝາຍດຽວກັນນັ້ນມາເປັນບ່ອນອີງໃນການພິຈາລະນາໃນຂັ້ນອຸທອນ. ອີງຕາມຄຳຖາມ-ຕອບ ຂໍ້ 46 ຂອງເອກະສານສັງລວມບັນຫາວິຊາການ (ຖາມ-ຕອບ) ໃນກອງປະຊຸມໃຫຍ່ຜູ້ພິພາກສາ ຄັ້ງທີ X (ວັນທີ 19-20 ມັງກອນ 2021) ໜ້າ 25 ທີ່ຂຽນດັ່ງນີ້:

	"ຄຳຖາມ 46. ຂໍ້ຂັດແຍ່ງ ເກີດຂຶ້ນກ່ອນປະມວນກົດໝາຍແພ່ງ ຖືກຮັບຮອງ ແຕ່ຄູ່ຄວາມ ໄດ້ຮ້ອງຟ້ອງພາຍຫຼັງປະມວນກົດໝາຍແພ່ງປະກາດໃຊ້ນັ້ນ, ໃນການ ພິຈາລະນາຂໍ້ຂັດແຍ່ງດັ່ງກ່າວ ຈະນຳໃຊ້ກົດໝາຍເກົ່າ ຫຼື ປະມວນກົດໝາຍແພ່ງ? ຕອບ: ໃຫ້ນຳໃຊ້ກົດໝາຍທີ່ມີຜົນສັກສິດ ໃນເວລາເຮັດນິຕິກຳນັ້ນ ເຊິ່ງມາດຕາ 630 ວັກ 2 ຂອງປະມວນກົດໝາຍແພ່ງ ປີ 2019 ໄດ້ກຳນົດວ່າ: ນິຕິກຳໃດສ້າງ ຂຶ້ນກ່ອນປະມວນກົດໝາຍແພ່ງ ໃຫ້ນຳໃຊ້ບົດບັນຍັດຂອງກົດໝາຍເວັ້ນເສຍແຕ່ ກົດໝາຍຫາກກຳນົດເປັນຢ່າງອື່ນ".